# ພຣະຄໍາພີ

## ພຣະສັນຍາເດີມ

ຊະບັບ 2015

# ສາລາບານ


| ຊື່ພຣະທຳ | ຕົວຫຍໍ້ | ໜ້າ |
|---|---|---|
| ປະຖົມມະການ | ປຖກ | 1 |
| ອົບພະຍົບ | ອພຍ | 86 |
| ລະບຽບພວກເລວີ | ລລວ | 153 |
| ຈົດເຊັນບັນຊີ | ຈຊບ | 200 |
| ພຣະບັນຍັດສອງ | ພບຍ | 268 |
| ໂຢຊວຍ | ຢຊຍ | 328 |
| ພວກຜູ້ປົກຄອງ | ຜປຄ | 368 |
| ນາງຣຸດ | ນຣດ | 409 |
| 1 ຊາມູເອນ | 1ຊມອ | 415 |
| 2 ຊາມູເອນ | 2ຊມອ | 471 |
| 1 ກະສັດ | 1ກສດ | 519 |
| 2 ກະສັດ | 2ກສດ | 572 |
| 1 ຂ່າວຄາວ | 1ຂຄວ | 625 |
| 2 ຂ່າວຄາວ | 2ຂຄວ | 682 |
| ເອັດຊະຣາ | ອສຣ | 744 |
| ເນເຣມີຢາ | ນຣຢ | 763 |
| ເອສະເທີ | ອຊທ | 788 |
| ໂຢບ | ໂຢບ | 801 |
| ເພງສັນລະເສີນ | ພສສ | 870 |
| ສຸພາສິດ | ສພສ | 1066 |

| ຊື່ພຣະທຳ | ຕົວຫຍໍ້ | ໜ້າ |
|---|---|---|
| ປັນຍາຈານ | ປຍຈ | 1125 |
| ຍອດເພງ | ຍດພ | 1141 |
| ເອຊາຢາ | ອຊຢ | 1153 |
| ເຢເຣມີຢາ | ພຄຄ | 1275 |
| ເພງຄ່ຳຄວນ | ຢຣມ | 1375 |
| ເອເຊກີເອນ | ອສກ | 1389 |
| ດານີເອນ | ດນອ | 1471 |
| ໂຮເຊອາ | ຮຊອ | 1496 |
| ໂຢເອນ | ຢອນ | 1511 |
| ອາໂມດ | ອມດ | 1519 |
| ໂອບາດີຢາ | ອບດ | 1531 |
| ໂຢນາ | ໂຢນ | 1533 |
| ມີກາ | ມກາ | 1537 |
| ນາຮູມ | ນຮມ | 1546 |
| ຮາບາກຸກ | ຮບກ | 1549 |
| ເຊຟານີຢາ | ສຟຢ | 1554 |
| ຮັກກາຍ | ຮກຍ | 1559 |
| ເສກາລີຢາ | ສກຢ | 1562 |
| ມາລາກີ | ມລກ | 1577 |



The 2015 edition of the Lao Bible has been revised and extended from the Lao Shorter Old Testament and New Testament, copyright 1991 by Thailand Bible Society.


For more information, please visit **http://laobible.net/**.

# ປະຖົມມະການ

## ບົດທີ 1

### ພຣະເຈົ້າຊົງສ້າງໂລກ

1ໃນຕົ້ນເດີມນັ້ນ ພຣະເຈົ້າຊົງນິລະມິດສ້າງແຜ່ນດິນ ແລະສັບພະທຸກສິ່ງໃນທ້ອງຟ້າ.

2ໂລກບໍ່ທັນມີຮູບຮ່າງເທື່ອ ຄວາມມືດຫຸ້ມຫໍ່ມະຫາສະໝຸດອັນກວ້າງໃຫຍ່ໄພສານ ແລະພຣະ-
ວິນຍານຂອງພຣະເຈົ້າຊົງວົນວຽນຢູ່ເທິງນໍ້າ. 3ພຣະເຈົ້າຊົງສັ່ງວ່າ, "ໃຫ້ແສງສະຫວ່າງເກີດມີ
ຂຶ້ນ" ແສງສະຫວ່າງກໍມີຂຶ້ນມາ. 4ພຣະອົງຈຶ່ງຊົງທອດພຣະເນດແສງສະຫວ່າງດ້ວຍຄວາມພໍ-
ພຣະໄທ. ດັ່ງນັ້ນ ຈຶ່ງຊົງແຍກແສງສະຫວ່າງອອກຈາກຄວາມມືດ 5ພຣະອົງຊົງເອີ້ນແສງສະ-
ຫວ່າງນັ້ນວ່າ, "ກາງເວັນ" ແລະຊົງເອີ້ນຄວາມມືດນັ້ນວ່າ, "ກາງຄືນ" ມື້ຄືນຜ່ານໄປ ມື້ເຊົ້າຕ່າວ
ມາ ແມ່ນມື້ທີໜຶ່ງ.

6ຕໍ່ມາ ພຣະເຈົ້າຊົງສັ່ງວ່າ, "ໃຫ້ມີວົງໂຄ້ງແຍກນໍ້າອອກຈາກກັນເປັນສອງສ່ວນ ຄື: ນໍ້າຢູ່
ເທິງວົງໂຄ້ງ ແລະນໍ້າຢູ່ລຸ່ມວົງໂຄ້ງ." 7ແລ້ວສິ່ງນັ້ນກໍເກີດມີມາ. 8ດັ່ງນັ້ນ ພຣະເຈົ້າຈຶ່ງຊົງເຮັດ
ວົງໂຄ້ງ ແລະຊົງເອີ້ນວົງໂຄ້ງນັ້ນວ່າ, "ຟ້າ" ມື້ຄືນຜ່ານໄປ ແລະມື້ເຊົ້າຕ່າວມາ ແມ່ນມື້ທີສອງ.

9ຕໍ່ມາອີກ ພຣະເຈົ້າຊົງສັ່ງວ່າ, "ໃຫ້ນໍ້າທີ່ຢູ່ລຸ່ມທ້ອງຟ້າໂຮມເຂົ້າກັນຢູ່ບ່ອນດຽວ ເພື່ອໃຫ້ມີ
ວັດຖຸແຫ້ງປະກົດຂຶ້ນ" ແລ້ວສິ່ງນັ້ນກໍເກີດມີມາ. 10ພຣະອົງຊົງເອີ້ນວັດຖຸແຫ້ງນັ້ນວ່າ, "ແຜ່ນດິນ"
ແລະຊົງເອີ້ນນໍ້າທີ່ໂຮມເຂົ້າກັນນັ້ນວ່າ, "ມະຫາສະໝຸດ" ພຣະອົງຊົງຊົມສິ່ງທີ່ນິລະມິດສ້າງຂຶ້ນ
ມາແລ້ວນັ້ນ ກໍຊົງພໍພຣະໄທ.

11ຈຶ່ງຊົງສັ່ງວ່າ, "ໃຫ້ແຜ່ນດິນເກີດພືດທຸກຊະນິດ ທັງແນວເປັນເມັດ ແລະແນວເປັນໝາກ"
ແລ້ວທຸກສິ່ງກໍເກີດມີມາ. 12ດັ່ງນັ້ນ ພືດທຸກຊະນິດຈຶ່ງເກີດມີຂຶ້ນຕາມທີ່ພຣະອົງຊົງສັ່ງ ພຣະອົງ
ຊົງທອດພຣະເນດ ສິ່ງທີ່ຊົງນິລະມິດສ້າງກໍຊົງພໍພຣະໄທ. 13ມື້ຄືນຜ່ານໄປ ແລະມື້ເຊົ້າຕ່າວມາ
ແມ່ນມື້ທີສາມ.

14ຕໍ່ມາ ພຣະເຈົ້າຊົງສັ່ງວ່າ, "ໃຫ້ມີດວງແຈ້ງໃນທ້ອງຟ້າ ແຍກກາງເວັນ ແລະກາງຄືນ
ແລະໃຫ້ກຳນົດເວລາຂອງມື້ ຂອງປີ ແລະຂອງລະດູການ. 15ພ້ອມທັງສົ່ງແສງລົງມາເທິງແຜ່ນ-
ດິນໂລກ ແລ້ວສິ່ງນັ້ນກໍເກີດມີມາ. 16ດັ່ງນັ້ນ ພຣະເຈົ້າຈຶ່ງຊົງສ້າງດວງແຈ້ງໃຫຍ່ສອງດວງ ຄື
ດວງຕາເວັນ ສຳລັບຄອບຄອງກາງເວັນ ແລະດວງຈັນສຳລັບຄອບຄອງກາງຄືນ ພຣະອົງຍັງ
ໄດ້ຊົງສ້າງໝູ່ດວງດາວຕ່າງໆ ອີກ. 17ພຣະອົງໄດ້ຕັ້ງດວງຕາເວັນ ດວງຈັນ ແລະດວງດາວ
ຕ່າງໆ ທີ່ຢູ່ເທິງຟ້າ ໃຫ້ສົ່ງແສງສະຫວ່າງ ລົງມາສູ່ແຜ່ນດິນໂລກ. 18ເພື່ອກຳນົດກາງເວັນກາງ-
ຄືນ ແລະແຍກແສງສະຫວ່າງອອກຈາກຄວາມມືດ ພຣະອົງຊົງທອດພຣະເນດສິ່ງທີ່ນິລະມິດ
ສ້າງ ກໍຊົງພໍພຣະໄທ. 19ມື້ຄືນຜ່ານໄປ ແລະມື້ເຊົ້າຕ່າວມາ ແມ່ນມື້ທີສີ່.

20ແລ້ວຕໍ່ມາ ພຣະອົງຊົງສັ່ງວ່າ, "ໃຫ້ສັດຫລາຍແນວເກີດຂຶ້ນໃນນໍ້າ ແລະໃຫ້ມີນົກບິນໄປມາ
ໃນທ້ອງຟ້າອາກາດ" ແລ້ວກໍເປັນດັ່ງນັ້ນ. 21ສະນັ້ນ ພຣະເຈົ້າຈຶ່ງຊົງນິລະມິດສ້າງສັດທະເລຂະ

ໜາດໃຫຍ່ ແລະສິ່ງທີ່ມີຊີວິດທຸກຊະນິດເກີດຂຶ້ນມາໃນນໍ້າ ແລະຊົງສ້າງນົກທຸກຊະນິດໃນທ້ອງ-
ຟ້າອາກາດ ພຣະອົງຊົງທອດພຣະເນດສິ່ງທີ່ນິລະມິດສ້າງ ກໍຊົງພໍພຣະໄທ. 22ແລ້ວຊົງອວຍ-
ພອນແກ່ສັດເຫລົ່ານັ້ນວ່າ, “ຈົ່ງອອກແມ່ແຜ່ລູກໃຫ້ເຕັມມະຫາສະໝຸດ ແລະໃຫ້ມີຝູງນົກແຜ່ຜາຍ
ຂະຫຍາຍພັນຫລາຍຂຶ້ນເທິງແຜ່ນດິນໂລກ.” 23ມື້ຄືນຜ່ານໄປ ແລະມື້ເຊົ້າຕ່າວມາ ແມ່ນມື້ທີຫ້າ.
24ຄັນຕໍ່ມາ ພຣະເຈົ້າຊົງສັ່ງອີກວ່າ, “ໃຫ້ສັດຕ່າງໆ ຄືສັດບ້ານສັດປ່າ ແລະສັດເລືອຄານ
ເກີດມີຂຶ້ນທົ່ວໂລກ” ແລ້ວສິ່ງນັ້ນກໍເກີດມີມາ. 25ດັ່ງນັ້ນ ພຣະເຈົ້າຈຶ່ງຊົງນິລະມິດສ້າງສັດບ້ານ
ສັດປ່າ ແລະສັດເລືອຄານທຸກຊະນິດ ພຣະອົງຊົງທອດພຣະເນດສັດເຫລົ່ານັ້ນ ກໍຊົງພໍພຣະໄທ.
26ຄັນແລ້ວ ພຣະເຈົ້າຈຶ່ງຊົງກ່າວວ່າ, “ບັດນີ້ເຮົາຈະສ້າງມະນຸດໃຫ້ມີຮູບຮ່າງຄ້າຍຄືເຮົາເອງ
ເຂົາຈະມີອຳນາດເໜືອກວ່າປາ ນົກ ສັດປ່າ ແລະສັດເລືອຄານຕ່າງໆ.”
27ດັ່ງນັ້ນ ພຣະເຈົ້າຈຶ່ງຊົງສ້າງມະນຸດໃຫ້ມີຮູບຮ່າງຄ້າຍ ຄືກັນກັບພຣະອົງ ພຣະອົງໄດ້ຊົງ
ສ້າງຊາຍ ແລະຍິງ.
28ຄັນສ້າງແລ້ວ ກໍຊົງອວຍພອນໃຫ້ແກ່ເຂົາວ່າ, “ຈົ່ງມີລູກເຕົ້າໃຫ້ມາກຫລາຍ ໃຫ້ເຊື້ອສາຍ
ຂອງພວກເຈົ້າມີຢູ່ທົ່ວທຸກແຫ່ງເພື່ອຄຸ້ມຄອງໂລກເຮົາ ໃຫ້ພວກເຈົ້າມີອຳນາດເໜືອກວ່າປາ ນົກ
ສັດປ່າ ແລະສັດເລືອຄານທຸກຊະນິດ.” 29ພຣະເຈົ້າຊົງກ່າວຕໍ່ໄປວ່າ, “ສຳລັບພວກເຈົ້າເຮົາໄດ້
ໃຫ້ພືດ ແລະໝາກໄມ້ທຸກຊະນິດເປັນອາຫານ. 30ແຕ່ສຳລັບສັດປ່າ ສັດເລືອຄານ ແລະຝູງນົກ
ນັ້ນເຮົາໄດ້ໃຫ້ຫຍ້າເປັນອາຫານ” ແລ້ວສິ່ງນັ້ນກໍເກີດມີມາ.
31ພຣະເຈົ້າຊົງທອດພຣະເນດສັບພະທຸກສິ່ງທີ່ຊົງນິລະມິດສ້າງ ກໍຊົງພໍພຣະໄທຫລາຍ ມື້ຄືນ
ຜ່ານໄປມື້ເຊົ້າຕ່າວມາ ແມ່ນມື້ທີຫົກ.

# ບົດທີ 2

1ດັ່ງນັ້ນ ແຜ່ນດິນໂລກ ທ້ອງຟ້າ ສັບພະທຸກສິ່ງໃນໂລກ ແລະໃນທ້ອງຟ້າກໍສຳເລັດເສັດສິ້ນ.
2ໃນມື້ທີເຈັດ ສັບພະທຸກສິ່ງກໍສຳເລັດໝົດແລ້ວ ໃນວັນນີ້ ພຣະເຈົ້າຊົງພັກຜ່ອນ ແລະຢຸດກິດ-
ຈະການທັງປວງ. 3ພຣະອົງຊົງອວຍພອນແກ່ມື້ທີເຈັດ ແລ້ວຕັ້ງເປັນວັນຂອງພຣະເຈົ້າ ເພາະໃນ
ວັນນັ້ນການນິລະມິດສ້າງກໍສຳເລັດໝົດແລ້ວ ແລະພຣະອົງຊົງຢຸດກິດຈະການທັງປວງ.
4ແລະທຸກສິ່ງໃນທ້ອງຟ້າ ກໍເປັນມາດັ່ງໄດ້ກ່າວມານີ້.

## ມະນຸດໃນສວນເອເດັນ

ເມື່ອພຣະຜູ້ເປັນເຈົ້າໄດ້ຊົງສ້າງແຜ່ນດິນໂລກ ແລະທ້ອງຟ້າສຳເລັດແລ້ວ.
5ຕົ້ນໄມ້ກໍຫຍ້າກໍຍັງບໍ່ທັນມີເລີຍ ເພາະວ່າພຣະເຈົ້າຍັງບໍ່ທັນເຮັດໃຫ້ຝົນຕົກ ແລະບໍ່ມີຄົນທຳ
ມາຫາກິນເທິງແຜ່ນດິນໂລກເທື່ອ. 6ເຖິງແມ່ນວ່າຈະບໍ່ມີຝົນຕົກກໍດີ ກໍຍັງມີອາຍນໍ້າຂຶ້ນມາຈາກ
ດິນ ເພື່ອເຮັດໃຫ້ພື້ນດິນເກີດຄວາມຊຸ່ມຊື່ນ. 7ເມື່ອນັ້ນ ພຣະຜູ້ເປັນເຈົ້າໄດ້ເອົາດິນມາປັ້ນເປັນ
ຮູບຄົນແລ້ວເປົ່າລົມຫາຍໃຈໃສ່ຮູດັງ ໃຫ້ມີຊີວິດ ຮູບປັ້ນນັ້ນກໍກັບກາຍເປັນຄົນທີ່ມີຊີວິດຈິດວິນ
ຍານ.
8ຕໍ່ມາ ພຣະຜູ້ເປັນເຈົ້າຊົງສ້າງສວນແຫ່ງໜຶ່ງຂຶ້ນ ໃນເອເດັນ ທາງທິດຕາເວັນອອກ ເມື່ອ

ສ້າງແລ້ວກໍຊົງເອົາຄົນທີ່ພຣະອົງໄດ້ປັ້ນນັ້ນມາອາໄສຢູ່. 9ໃນສວນນັ້ນພຣະອົງໄດ້ຊົງນິລະມິດໃຫ້
ຕົ້ນໄມ້ເກີດຂຶ້ນຊຶ່ງມີໃບຂຽວງາມດີ ແລະໝາກໄມ້ກໍເປັນໜ້າຢາກກິນ ໃນກາງສວນມີຕົ້ນໄມ້ພິ-
ເສດຢູ່ສອງຕົ້ນ ຄືຕົ້ນໄມ້ທີ່ໃຫ້ມີຊີວິດ ແລະຕົ້ນໄມ້ທີ່ໃຫ້ຮູ້ຈັກຄວາມດີ ແລະຄວາມຊົ່ວ.
10ນອກນີ້ ຍັງມີແມ່ນ້ຳສາຍໜຶ່ງໄຫລອອກຈາກ ເອເດັນມາຊຸບລ້ຽງສວນນີ້ ແມ່ນ້ຳນີ້ແບ່ງ
ອອກເປັນສີ່ສາຍ. 11ສາຍທີໜຶ່ງຊື່ວ່າປີໂຊນ ຊຶ່ງໄຫລອ້ອມປະເທດ ຮາວີລາ. 12ໃນປະເທດນີ້ມີ
ບໍ່ຄຳຊັ້ນດີ, ມີແກ້ວປະເສີດໂມລາ ແລະຕົ້ນຢາງຫອມທີ່ມີຄ່າ. 13ສາຍທີສອງຊື່ວ່າກີໂຮນຊຶ່ງ
ໄຫລອ້ອມປະເທດ ກູເຊ. 14ສາຍທີສາມຊື່ວ່າຕິກຣິດ ຊຶ່ງໄຫລຜ່ານປະເທດອັດຊີເຣຍທາງທິດ-
ຕາເວັນອອກ ແລະສາຍທີສີ່ຊື່ວ່າ ເອຟຣາດ.
15ພຣະຜູ້ເປັນເຈົ້າໄດ້ເອົາຄົນທີ່ພຣະອົງສ້າງນັ້ນ ມາເຝົ້າຮັກສາ ແລະເບິ່ງແຍງສວນ.
16ພຣະອົງຊົງສັ່ງແກ່ຊາຍຜູ້ນັ້ນວ່າ, “ໝາກໄມ້ທຸກໆ ຕົ້ນໃນສວນນີ້ເຈົ້າກິນໄດ້ໝົດ. 17ເວັ້ນໄວ້
ແຕ່ຕົ້ນທີ່ໃຫ້ຮູ້ຈັກຄວາມດີ ແລະຄວາມຊົ່ວ ເຈົ້າຢ່າກິນ ຖ້າເຈົ້າຂືນກິນໝາກໄມ້ໃນຕົ້ນນີ້ ເຈົ້າຈະ
ຕ້ອງເຖິງແກ່ຄວາມຕາຍ.”
18ພຣະຜູ້ເປັນເຈົ້າຊົງກ່າວອີກວ່າ, “ບໍ່ເປັນການສົມຄວນທີ່ໃຫ້ຜູ້ຊາຍຢູ່ໂດດດ່ຽວເຊັ່ນນີ້ ເຮົາ
ຄວນຫາຜູ້ຊິດຊ່ອຍທີ່ເໝາະສົມໃຫ້ລາວ.” 19ຄັນແລ້ວ ພຣະອົງຈຶ່ງເອົາຂີ້ດິນປັ້ນເປັນສັດ ແລະ
ນົກຕ່າງໆ ແລ້ວເອົາສັດ ແລະນົກທີ່ປັ້ນນັ້ນໃຫ້ຊາຍຜູ້ຮັກສາສວນເບິ່ງ ເພື່ອຢາກຮູ້ວ່າລາວຈະ
ໃສ່ຊື່ຫຍັງໃຫ້ ຄັນແລ້ວຊື່ທີ່ລາວຕັ້ງນັ້ນກໍເປັນຊື່ຂອງສັດຕ່າງໆຕໍ່ໆມາ. 20ຫລັງຈາກຊາຍຜູ້ນັ້ນ
ໄດ້ຕັ້ງຊື່ໃຫ້ສັດຕ່າງໆ ແຕ່ສັດເຫລົ່ານັ້ນກໍບໍ່ໄດ້ເປັນຜູ້ຊ່ອຍລາວຫຍັງໝົດ. 21ເມື່ອເປັນດັ່ງນັ້ນ
ພຣະຜູ້ເປັນເຈົ້າຈຶ່ງຊົງເຮັດໃຫ້ຊາຍຜູ້ນັ້ນນອນຫລັບສະໜິດ ໃນຂະນະນອນຫລັບຢູ່ນັ້ນ ພຣະອົງ
ຊົງເອົາກະດູກຂ້າງຊີກໜຶ່ງຂອງລາວອອກມາ ແລ້ວຊົງເຮັດໃຫ້ເນື້ອໜັງຈອດຕິດກັນດັ່ງເດີມ.
22ພຣະອົງຊົງເອົາກະດູກຂ້າງນັ້ນມາສ້າງເປັນຜູ້ຍິງ ເມື່ອສ້າງແລ້ວພຣະອົງກໍຊົງມອບຍິງນັ້ນໃຫ້
ແກ່ລາວ. 23ຊາຍຜູ້ນັ້ນຈຶ່ງເວົ້າວ່າ:

“ໃນທີ່ສຸດ ນີ້ເດ ຜູ້ຊຶ່ງມີຮູບຮ່າງຄືເຮົາ
ກະດູກຂອງນາງ ມາຈາກກະດູກຂອງເຮົາ
ເນື້ອໜັງຂອງນາງ ມາຈາກເນື້ອໜັງຂອງເຮົາ
ນາງຊື່ວ່າ ຜູ້ຍິງ ເພາະນາງມາຈາກຜູ້ຊາຍ.”

24ດ້ວຍເຫດນີ້ ຜູ້ຊາຍຈຶ່ງຕ້ອງລາຈາກພໍ່ແມ່ຂອງຕົນ ໄປຕິດພັນຢູ່ກັບເມຍແລ້ວເຂົາທັງສອງກໍ
ກາຍເປັນຄົນ ຄົນດຽວກັນ. 25ຜູ້ຊາຍ ແລະຜູ້ຍິງນັ້ນເປືອຍກາຍຢູ່ ໂດຍບໍ່ຮູ້ສຶກອາຍກັນເລີຍ.

# ບົດທີ 3

## ມະນຸດຕົກຢູ່ໃນຄວາມບາບ

1ງູເປັນສັດທີ່ຫລັກແຫລມກວ່າສັດທັງຫລາຍທີ່ພຣະຜູ້ເປັນເຈົ້າໄດ້ສ້າງໄວ້ ງູໄດ້ຖາມຜູ້ຍິງວ່າ,
“ແມ່ນແທ້ບໍ ທີ່ພຣະເຈົ້າຊົງຫ້າມບໍ່ໃຫ້ພວກເຈົ້າກິນໝາກໄມ້ໃນສວນນີ້?” 2ຜູ້ຍິງນັ້ນຕອບວ່າ,
“ໝາກໄມ້ທຸກໆ ຕົ້ນໃນສວນນີ້ ພວກເຮົາກິນໄດ້ 3ເວັ້ນໄວ້ແຕ່ໝາກໄມ້ໃນຕົ້ນທີ່ຢູ່ກາງສວນນັ້ນ.

ເພາະພຣະເຈົ້າບອກບໍ່ໃຫ້ພວກເຮົາກິນ ຫລື ແມ່ນແຕ່ແຕະຕ້ອງເປັນເດັດຂາດ ຖ້າພວກເຮົາຂືນ
ກິນ ພວກເຮົາຕ້ອງຕາຍ.” [4]ງູຈຶ່ງຕອບວ່າ, “ບໍ່ເປັນຄວາມຈິງ ພວກເຈົ້າຈະບໍ່ຕາຍດອກ. [5]ພຣະ-
ເຈົ້າເວົ້າເຊັ່ນນັ້ນ ກໍເພາະພຣະອົງຊົງຮູ້ດີວ່າ ເມື່ອໃດທີ່ເຈົ້າກິນໝາກໄມ້ນັ້ນ ເຈົ້າຈະຮູ້ແຈ້ງເຫັນ
ຈິງກັບຈະຮູ້ການດີ ແລະການຊົ່ວເໝືອນດັ່ງພຣະອົງ.”

[6]ຜູ້ຍິງເຫັນວ່າໝາກໄມ້ໃນຕົ້ນນັ້ນຊ່າງງາມ ແລະເປັນໜ້າຢາກກິນອີ່ຫລີ ນອກນີ້ນາງຍັງຄິດ
ວ່າຈະມີສະຕິປັນຍາອີກ ດັ່ງນັ້ນ ນາງຈຶ່ງຕັດສິນໃຈປິດເອົາໝາກໄມ້ແລ້ວກິນ ຄັນແລ້ວຈຶ່ງເອົາ
ໝາກໄມ້ນັ້ນໃຫ້ຜົວນາງກິນນຳ. [7]ຫລັງຈາກກິນໝາກໄມ້ແລ້ວ ໃນທັນໃດນັ້ນ ພວກເຂົາຈຶ່ງຮູ້
ແຈ້ງເຫັນຈິງ ແລະຮູ້ວ່າ ພວກຕົນກຳລັງເປືອຍກາຍຢູ່ ດັ່ງນັ້ນ ພວກເຂົາຈຶ່ງພາກັນເອົາໃບໄມ້ມາ
ຫຍິບເຂົ້າກັນເຮັດເປັນເຄື່ອງນຸ່ງ.

[8]ໃນຄືນວັນນັ້ນ ພວກເຂົາໄດ້ຍິນສຽງຍ່າງ ຂອງພຣະຜູ້ເປັນເຈົ້າໃນສວນ ພວກເຂົາຈຶ່ງພາ-
ກັນຫລົບລີ້ຢູ່ໃນທ່າມກາງຕົ້ນໄມ້. [9]ແຕ່ພຣະຜູ້ເປັນເຈົ້າໄດ້ຊົງເອີ້ນຫາຊາຍຜູ້ນັ້ນວ່າ, “ເຈົ້າຢູ່
ໃສ?” [10]ລາວຈຶ່ງຕອບວ່າ, “ຂ້ານ້ອຍໄດ້ຍິນສຽງຍ່າງຂອງພຣະອົງໃນສວນ ຂ້ານ້ອຍຢ້ານຈຶ່ງ
ຫລົບລີ້ຊ້ອນຕົວຢູ່ເພາະວ່າຂ້ານ້ອຍກຳລັງເປືອຍກາຍ.” [11]ພຣະເຈົ້າຈຶ່ງຖາມວ່າ, “ໃຜບອກວ່າ
ເຈົ້າເປືອຍກາຍ ບໍ່ແມ່ນເຈົ້າກິນໝາກໄມ້ທີ່ເຮົາໄດ້ຫ້າມນັ້ນຫລື?” [12]ຊາຍຜູ້ນັ້ນທູນຕອບວ່າ,
“ໂດຍຂ້ານ້ອຍ ແມ່ນຜູ້ຍິງທີ່ພຣະອົງປະທານໃຫ້ນັ້ນເອົາໝາກໄມ້ໃຫ້ຂ້ານ້ອຍກິນ.” [13]ແລ້ວ
ພຣະຜູ້ເປັນເຈົ້າຊົງຖາມຜູ້ຍິງນັ້ນວ່າ, “ເປັນຫຍັງເຈົ້າຈຶ່ງເຮັດເຊັ່ນນັ້ນ?” ນາງທູນຕອບວ່າ, “ງູ
ໄດ້ຍົວະໃຫ້ຂ້ານ້ອຍກິນ.”

## ພຣະເຈົ້າຊົງລົງໂທດ

[14]ຕໍ່ມາ ພຣະຜູ້ເປັນເຈົ້າຊົງບອກງູວ່າ:

“ດ້ວຍເຫດວ່າມຶງ ໄດ້ຫລອກລວງຜູ້ຍິງນັ້ນ
ແມ່ນມຶງເທົ່ານັ້ນ ທີ່ຈະໄດ້ຮັບການສາບແຊ່ງ
ໃນຈຳນວນສັດທັງປວງ
ແຕ່ບັດນີ້ໄປ ມຶງຈະລືເລືອໄປດ້ວຍທ້ອງ
ແລະຈະກິນຂີ້ດິນເປັນອາຫານ.
15 ມຶງກັບຜູ້ຍິງຈະຕ້ອງກຽດຊັງກັນ
ມະນຸດ ແລະງູຈະຕ້ອງເປັນສັດຕູກັນ
ມະນຸດຈະພະຍາຍາມຢຽບຫົວມຶງໃຫ້ແຕກ
ແລະມຶງກໍຈະພະຍາຍາມຕອດສົ້ນໜ່ອງຂອງລາວ.”

[16]ແລ້ວພຣະອົງຊົງກ່າວກັບຜູ້ຍິງນັ້ນວ່າ:

“ເຮົາຈະເພີ່ມຄວາມຫຍຸ້ງຍາກໃຫ້ແກ່ເຈົ້າເວລາຖືພາ
ແລະຈະໃຫ້ເຈົ້າອອກລູກດ້ວຍຄວາມເຈັບປວດ
ເຖິງປານນັ້ນເຈົ້າກໍຍັງຢາກໄດ້ຜົວຢູ່
ແລະຜົວນັ້ນຈະເປັນນາຍປົກຄອງເຈົ້າ.”

17ຄັນແລ້ວ ພຣະຜູ້ເປັນເຈົ້າຊົງກ່າວກັບອາດາມວ່າ:
"ເຈົ້າໄດ້ເຊື່ອຟັງເມຍຂອງເຈົ້າ
ເຈົ້າກິນໝາກໄມ້ຊຶ່ງເຮົາໄດ້ຫ້າມ
ຍ້ອນສິ່ງທີ່ເຈົ້າໄດ້ກະທຳມານັ້ນ
ຂີ້ດິນຈະຖືກສາບແຊ່ງ
ກ່ອນຈະໄດ້ອາຫານມາລ້ຽງຊີບ
ເຈົ້າຈະຕ້ອງເຮັດວຽກຢ່າງໜັກ
ຂຸດດິນຟັນໄມ້ຈົນໜ້າແຫລ້ໜ້າກ່ຳຕະຫລອດຊີວິດຂອງເຈົ້າ.
18 ຕົ້ນໄມ້ ແລະພືດຕ່າງໆ ທີ່ມີໜາມຈະເກີດຂຶ້ນສຳລັບເຈົ້າ
ແລະຈະກິນພືດນັ້ນເປັນອາຫານ.
19 ເຈົ້າຈະຕ້ອງຫາລ້ຽງຊີບດ້ວຍເຫື່ອໄຫລໄຄຍ້ອຍ
ຈົນກວ່າເຈົ້າຈະສິ້ນຊີວິດກັບຄືນໄປສູ່ດິນບ່ອນທີ່ເຈົ້າມາ
ເຈົ້າມາແຕ່ດິນ ເຈົ້າຈະຕ້ອງກັບໄປເປັນດິນອີກ."

20ອາດາມໃສ່ຊື່ໃຫ້ເມຍຂອງລາວວ່າ, "ເອວາ ຊຶ່ງມີຄວາມໝາຍວ່າ ນາງເປັນແມ່ຂອງມະນຸດ
ທັງປວງ. 21ຕໍ່ມາ ພຣະຜູ້ເປັນເຈົ້າໄດ້ປະທານເສື້ອທີ່ເຮັດດ້ວຍຂົນໜັງສັດໃຫ້ອາດາມ ແລະ
ເມຍຂອງລາວນຸ່ງຫົ່ມ.

## ອາດາມແລະເອວາຖືກໄລ່ອອກຈາກສວນ

22ຫລັງຈາກນັ້ນຕໍ່ມາ ພຣະຜູ້ເປັນເຈົ້າຊົງກ່າວວ່າ, "ບັດນີ້ມະນຸດໄດ້ກາຍເປັນເໝືອນພວກ
ເຮົາຄືຮູ້ຈັກການດີແລະການຊົ່ວ ເຂົາຈະບໍ່ໄດ້ກິນໝາກໄມ້ທີ່ໃຫ້ມີຊີວິດຕະຫລອດໄປເປັນນິດ."
23ດັ່ງນັ້ນ ພຣະຜູ້ເປັນເຈົ້າຈຶ່ງຂັບໄລ່ເຂົາອອກຈາກສວນເອເດັນ ໃຫ້ເຮັດວຽກຂຸດດິນຟັນໄມ້
ແລະທຳມາຫາກິນໃນດິນບ່ອນທີ່ກຳເນີດມານັ້ນ. 24ເມື່ອພຣະເຈົ້າໄດ້ຂັບໄລ່ມະນຸດອອກຈາກ
ສວນແລ້ວ ພຣະອົງໄດ້ຊົງແຕ່ງຕັ້ງເທວະດາເຄຣຸບ ທາງທິດຕາເວັນອອກຂອງສວນ ແລະຕັ້ງ
ດາບທີ່ມີແສງໄຟແກວ່ງໄປທົ່ວທຸກທິດ ເພື່ອປ້ອງກັນບໍ່ໃຫ້ຜູ້ໜຶ່ງຜູ້ໃດເຂົ້າໄປໃກ້ຕົ້ນໄມ້ທີ່ໃຫ້ມີຊີ-
ວິດຕະຫລອດໄປເປັນນິດໄດ້.

# ບົດທີ 4

## ກາອິນແລະອາເບັນ

1ຄັນຕໍ່ມາ ອາດາມໄດ້ສົມສູ່ຮ່ວມກັບເມຍຂອງຕົນ ນາງຈຶ່ງຖືພາແລ້ວໄດ້ເກີດລູກຊາຍຜູ້ໜຶ່ງ
ນາງຈຶ່ງເວົ້າວ່າ, "ຂ້ານ້ອຍໄດ້ລູກຊາຍຍ້ອນພຣະຜູ້ເປັນເຈົ້າເປັນຜູ້ຊົດຊ່ອຍ ດັ່ງນັ້ນນາງຈຶ່ງຕັ້ງຊື່
ໃຫ້ເດັກນ້ອຍວ່າ ກາອິນ. 2ຕໍ່ມານາງໄດ້ລູກອີກຜູ້ໜຶ່ງຊື່ວ່າ ອາເບັນ ຊຶ່ງມີອາຊີບເປັນຜູ້ລ້ຽງ
ແກະ ສ່ວນກາອິນເປັນພໍ່ນາ.

3ຄັນຕໍ່ມາວັນໜຶ່ງ ກາອິນກໍເອົາຜົນລະປູກມາຖວາຍແກ່ພຣະຜູ້ເປັນເຈົ້າ. 4ສ່ວນອາເບັນກໍ
ເອົາສັດເກີດແຕ່ທ້ອງປີ ທີ່ຕຸ້ຍພີດີງາມໃນຝູງສັດມາຂ້າ ແລ້ວເອົາເນື້ອສ່ວນທີ່ດີໆ ມາຖວາຍແກ່

ພຣະຜູ້ເປັນເຈົ້າ ພຣະອົງຊົງພໍພຣະໄທຕໍ່ເຄື່ອງບູຊາຂອງ ອາເບັນ. 5ສ່ວນການຖວາຍຂອງ ກາ-
ອິນ ນັ້ນບໍ່ເປັນທີ່ຊອບພຣະໄທຂອງ ພຣະຜູ້ເປັນເຈົ້າ ເລີຍ ກາອິນ ຈຶ່ງຄຽດແຄ້ນ ແລະເຕັມໄປ
ດ້ວຍຄວາມບໍ່ພໍໃຈ.
6ເມື່ອ ພຣະຜູ້ເປັນເຈົ້າ ຊົງ ເຫັນດັ່ງນັ້ນຈຶ່ງຊົງຖາມ ກາອິນ ວ່າ, “ກາອິນ ເອີຍ ເປັນຫຍັງເຈົ້າຈຶ່ງ
ຄຽດແຄ້ນ ແລະເຕັມໄປດ້ວຍຄວາມບໍ່ພໍໃຈ? 7ຖ້າເຈົ້າເຮັດດີແລ້ວ ເຈົ້າຄວນເງີຍໜ້າຂຶ້ນດ້ວຍ
ຄວາມຍິ້ມແຍ້ມ ແຕ່ດ້ວຍວ່າເຈົ້າເຮັດຊົ່ວ ຄວາມຊົ່ວກໍເໝືອນດັ່ງສັດຮ້າຍທີ່ກຳລັງລໍຄອຍຖ້າຄຸບ
ເຈົ້າ ມັນຈະຄຸບກິນເຈົ້າ ແຕ່ເຈົ້າຄວນເອົາຊະນະມັນໄດ້.”
8ຕໍ່ມາ ກາອິນ ຈຶ່ງ ເວົ້າກັບ ອາເບັນ ຜູ້ເປັນນ້ອງຊາຍວ່າ, “ເຮົາພາກັນໄປຍ່າງຫລິ້ນໃນທົ່ງນາ
ເທາະ” ເມື່ອສອງອ້າຍນ້ອງອອກໄປເຖິງທົ່ງນາແລ້ວ ກາອິນ ຜູ້ເປັນອ້າຍກໍປ້ຳນ້ອງຊາຍລົງດິນ
ແລ້ວຂ້າຖິ້ມ.
9ເມື່ອ ເປັນ ເຊັ່ນນີ້ ພຣະຜູ້ເປັນເຈົ້າ ຈຶ່ງ ຊົງ ຖາມ ກາອິນ ວ່າ, “ກາອິນ ເອີຍ ນ້ອງຊາຍ ເຈົ້າຢູ່
ໃສ?” ລາວໄດ້ຕອບວ່າ, “ຂ້ານ້ອຍບໍ່ຮູ້ຈັກ ຫລືວ່າ ພຣະອົງໃຫ້ຂ້ານ້ອຍເປັນຜູ້ຮັກສານ້ອງຊາຍ
ຂອງຂ້ານ້ອຍຊັ້ນບໍ?” 10ພຣະຜູ້ເປັນເຈົ້າ ຊົງ ຖາມອີກວ່າ, “ກາອິນ ເປັນຫຍັງ ເຈົ້າຈຶ່ງ ເຮັດ ເລື່ອງ
ໂຫດຮ້າຍເຊັ່ນນີ້? ນ້ອງຊາຍ ເຈົ້ານອນເລືອດອາບຕົວຢູ່ໃນທົ່ງນາ ກິ່ນເລືອດຂອງລາວຂຶ້ນມາຫາ
ເຮົາ ເໝືອນສຽງຂໍ ແກ້ແຄ້ນ. 11ເຈົ້າຈະຖືກດ່າ ຖືກສາບແຊ່ງ ແລະຖືກເນລະເທດອອກຈາກທົ່ງ
ນາບ່ອນຊຶ່ງດູດກິນເລືອດຂອງນ້ອງຊາຍຊຶ່ງເຈົ້າໄດ້ຂ້ານັ້ນ. 12ຖ້າເຈົ້າເຮັດໄຮ່ເຮັດນາ ດິນນັ້ນຈະ
ບໍ່ນຳຄວາມອຸດົມສົມບູນມາໃຫ້ ເຈົ້າຈະເປັນຄົນບໍ່ມີຫລັກແຫລ່ງຈະຊັດເຊພະເນຈອນໄປໃນໂລກ
ນີ້.” 13ກາອິນ ຈຶ່ງກາບທູນຂໍ ຕໍ່ ພຣະຜູ້ເປັນເຈົ້າ ວ່າ, “ໂທດນີ້ໜັກຫລາຍ ເກີນກວ່າຂ້ານ້ອຍຈະ
ທົນໄດ້. 14ພຣະອົງໄລ່ຂ້ານ້ອຍໃຫ້ໜີອອກຈາກທີ່ທຳມາຫາກິນ ແລະຈາກພຣະພັກຂອງພຣະອົງ
ໃຫ້ຂ້ານ້ອຍບໍ່ມີທີ່ພັກພາອາໄສ ແລະໃຫ້ເທາະທອບໄປໃນໂລກນີ້ ຖ້າໃຜພົບຂ້ານ້ອຍ ຜູ້ນັ້ນກໍຈະ
ຂ້າຂ້ານ້ອຍ. 15ພຣະຜູ້ເປັນເຈົ້າ ຊົງຕອບ ກາອິນ ວ່າ, “ບໍ່ດອກ ຖ້າຜູ້ໃດຂ້າເຈົ້າ ຜູ້ນັ້ນກໍຈະໄດ້
ຮັບ ໂທດ ເຈັດ ເທົ່າ” ດ້ວຍ ເຫດນີ້ ພຣະຜູ້ເປັນເຈົ້າ ຈຶ່ງ ເຮັດ ເຄື່ອງໝາຍ ໄວ້ໃນຕົວ ກາອິນ ເພື່ອວ່າ
ເມື່ອຜູ້ໃດພົບຈະບໍ່ໄດ້ຂ້າລາວ. 16ກາອິນ ຈຶ່ງໜີໄກຈາກພຣະພັກຂອງ ພຣະຜູ້ເປັນເຈົ້າ ໄປອາໄສ
ຢູ່ໃນດິນແດນແຫ່ງໜຶ່ງທີ່ມີຊື່ວ່າ ໂນດ ຢູ່ທາງທິດຕາເວັນອອກຂອງ ເອເດັນ.

## ເຊື້ອສາຍຂອງກາອິນ

17ຕໍ່ມາ ກາອິນ ໄດ້ສົມສູ່ຢູ່ຮ່ວມກັບ ເມຍຂອງລາວ ນາງ ໄດ້ຖືພາ ແລ້ວ ເກີດລູກຊາຍຜູ້ໜຶ່ງຊື່
ເອໂນກ ກາອິນ ໄດ້ສ້າງ ເມືອງໜຶ່ງຂຶ້ນແລ້ວເອົາຊື່ລູກຊາຍຂອງຕົນເປັນຊື່ເມືອງນັ້ນ. 18ເອໂນກ ມີ
ລູກຊາຍຜູ້ໜຶ່ງຊື່ ອີຣາດ ຊຶ່ງເປັນພໍ່ຂອງ ເມຮູຢາເອນ ເມຮູຢາເອນ ເປັນພໍ່ຂອງ ເມທູຊາເອນ
ແລະ ເມທູຊາເອນ ມີລູກຊາຍຊື່ວ່າ ລາເມັກ.
19ລາເມັກ ເອົາ ເມຍສອງຄົນ ຜູ້ທີໜຶ່ງຊື່ ອາດາ ແລະຜູ້ທີສອງຊື່ວ່າ ຊິນລາ. 20ອາດາ ໃຫ້ກຳ-
ເນີດລູກຊາຍຜູ້ໜຶ່ງຊື່ ຢາບານ ຊຶ່ງ ເປັນບັນພະບູລຸດຂອງພວກທີ່ອາໄສຢູ່ໃນຜ້າເຕັນ. 21ຢູບານ
ນ້ອງຊາຍຂອງ ຢາບານ ເປັນບັນພະບູລຸດຂອງນັກຫລິ້ນພິນ ແລະນັກເປົ່າຂຸ່ຍ. 22ຕໍ່ມາອີກຊິນລາ
ກໍເກີດລູກຊາຍຜູ້ໜຶ່ງຊື່ ຕູບານ-ກາອິນ ລາວເປັນບັນພະບູລຸດຂອງຊ່າງຕີໂລຫະ ຊຶ່ງມີອາຊີບໃນ

ການຕີເຫລັກແລະທອງສຳລິດ ຕູບານ-ກາອິນມີນ້ອງຊາຍຜູ້ໜຶ່ງຊື່ ນາອາມາ.
23ລາເມັກມັກເວົ້າອວດກັບເມຍທັງສອງວ່າ:

“ອາດາ ແລະ ຊິນລາ ເອີຍ ຈົ່ງຟັງເລື່ອງອ້າຍເລົ່າໃຫ້ດີ
ອ້າຍໄດ້ຂ້າຊາຍຜູ້ໜຶ່ງ ກໍເພາະວ່າລາວຕີອ້າຍໃຫ້ອ້າຍເຈັບຊໍ້າ.
24 ຖ້າຜູ້ໃດຕີກາອິນຜູ້ນັ້ນຈະໄດ້ຮັບໂທດເຈັດເທົ່າ
ແຕ່ວ່າ ຖ້າຜູ້ໃດຕີອ້າຍ ຜູ້ນັ້ນຈະໄດ້ຮັບໂທດເຈັດສິບເຈັດເທົ່າ.”

## ເຊື້ອສາຍຂອງເຊດ

25ອາດາມ ໄດ້ສົມສູ່ຢູ່ຮ່ວມກັບເມຍ ຈຶ່ງໄດ້ລູກຊາຍອີກຜູ້ໜຶ່ງ ເອວາໄດ້ເວົ້າວ່າ, “ພຣະເຈົ້າ
ຊົງໂຜດໃຫ້ຂ້ານ້ອຍມີລູກຊາຍອີກ ເພື່ອທົດແທນອາເບັນຜູ້ຊຶ່ງກາອິນໄດ້ຂ້າ” ດັ່ງນັ້ນ ນາງຈຶ່ງ
ໃຫ້ຊື່ລູກຊາຍນັ້ນວ່າ ເຊດ. 26ຕໍ່ມາເຊດມີລູກຊາຍຜູ້ໜຶ່ງຊື່ວ່າ ເອໂນດ ຕັ້ງແຕ່ເວລານັ້ນມາ
ມະນຸດໄດ້ເລີ່ມຕົ້ນນະມັດສະການ ອອກພຣະນາມພຣະຜູ້ເປັນເຈົ້າ.

# ບົດທີ 5

## ເຊື້ອສາຍຂອງອາດາມ

1ອັນນີ້ແມ່ນໜັງສືປະຫວັດເຊື້ອສາຍຂອງອາດາມ ເມື່ອພຣະເຈົ້າໄດ້ສ້າງອາດາມ ພຣະອົງ
ໄດ້ສ້າງເພິ່ນໃຫ້ເໝືອນພຣະອົງເອງ. 2ພຣະອົງໄດ້ສ້າງຜູ້ຊາຍ ແລະຜູ້ຍິງ ເມື່ອສ້າງແລ້ວກໍຊົງ
ອວຍພອນໃຫ້ ແລະຕັ້ງຊື່ໃຫ້ພວກເຂົາວ່າ, “ມະນຸດ.”

3ເມື່ອອາດາມອາຍຸໄດ້ຮ້ອຍສາມສິບປີ ເພິ່ນມີລູກຊາຍຄ້າຍຄືກັບເພິ່ນ ລາວມີຊື່ວ່າ ເຊດ.
4ຫລັງຈາກນັ້ນອາດາມກໍມີອາຍຸຍືນຍາວມາຮອດແປດຮ້ອຍປີ. ເພິ່ນມີລູກຊາຍຍິງອີກຫລາຍຄົນ
5ແລ້ວໄດ້ເຖິງແກ່ກຳໄປ ເມື່ອອາຍຸ ເກົ້າຮ້ອຍສາມສິບປີ.

6ເມື່ອເຊດອາຍຸໄດ້ຮ້ອຍຫ້າປີ ເພິ່ນໄດ້ລູກຊາຍຜູ້ໜຶ່ງຊື່ ເອໂນດ. 7ຫລັງຈາກນັ້ນ ເຊດ ມີ
ອາຍຸຍືນຍາວມາອີກແປດຮ້ອຍເຈັດປີ ເພິ່ນມີລູກຊາຍ ແລະຍິງຫລາຍຄົນ. 8ແລ້ວກໍເຖິງແກ່ກຳ
ໄປເມື່ອອາຍຸ ເກົ້າຮ້ອຍສິບສອງປີ.

9ເມື່ອເອໂນດອາຍຸໄດ້ເກົ້າສິບປີ ເພິ່ນໄດ້ລູກຊາຍຜູ້ໜຶ່ງຊື່ ເກນານ. 10ຫລັງຈາກນັ້ນ ເອໂນດ
ມີອາຍຸຍືນຍາວມາອີກຮອດແປດຮ້ອຍສິບຫ້າປີ ເພິ່ນມີລູກຊາຍຍິງຫລາຍຄົນ. 11ແລ້ວກໍເຖິງແກ່
ກຳໄປເມື່ອອາຍຸໄດ້ 905 ປີ.

12ເມື່ອເກນານອາຍຸໄດ້ເຈັດສິບປີ ເພິ່ນໄດ້ລູກຊາຍຜູ້ໜຶ່ງຊື່ ມາຮາລາເລນ. 13ຫລັງຈາກນັ້ນ
ເກນານມີອາຍຸຍືນຍາວອີກຮອດ 840 ປີ ເພິ່ນມີລູກຊາຍ ແລະຍິງຫລາຍຄົນ. 14ແລ້ວກໍເຖິງແກ່
ກຳໄປເມື່ອອາຍຸ 910 ປີ.

15ເມື່ອມາຮາລາເລນອາຍຸໄດ້ 65 ປີ ເພິ່ນໄດ້ລູກຊາຍຜູ້ໜຶ່ງຊື່ຢາເຣັດ. 16ຫລັງຈາກນັ້ນ
ມາຮາລາເລນມີອາຍຸຍືນຍາວມາອີກຮອດ 830 ປີ ເພິ່ນມີລູກຊາຍ ແລະຍິງອີກຫລາຍຄົນ.
17ແລ້ວກໍເຖິງແກ່ກຳໄປເມືອອາຍຸ 895 ປີ.

18ເມື່ອຢາເຣັດອາຍຸໄດ້ ຮ້ອຍຫົກສິບສອງປີ ເພິ່ນມີລູກຊາຍ ຜູ້ໜຶ່ງຊື່ ເອໂນກ. 19ຫລັງຈາກ

ນັ້ນ ຢາເຣັດມີອາຍຸຍືນຍາວມາຮອດ ແປດຮ້ອຍປີ ເພິ່ນມີລູກຊາຍ ແລະຍິງຫລາຍຄົນ. [20]ແລ້ວ
ກໍເຖິງແກ່ກຳໄປເມື່ອອາຍຸ 962 ປີ.
[21]ເມື່ອ ເອໂນກ ອາຍຸໄດ້ຫົກສິບຫ້າປີ ເພິ່ນມີລູກຊາຍຜູ້ໜຶ່ງຊື່ ເມທູເຊລາ. [22]ຫລັງຈາກນັ້ນ ເອ-
ໂນກ ໄດ້ຕິດຕາມພຣະເຈົ້າໄປຕື່ມອີກ ສາມຮ້ອຍປີ ເພິ່ນມີລູກຊາຍ ແລະຍິງຫລາຍຄົນ. [23]ລວມ
ອາຍຸທັງໝົດ ເອໂນກ ແມ່ນ 365 ປີ. [24]ເພິ່ນໄດ້ຕິດຕາມພຣະເຈົ້າໄປຈົນຊົ່ວຊີວິດ ແລ້ວພຣະອົງ
ກໍໄດ້ຊົງຮັບເອົາເພິ່ນໄປຢູ່ນຳ.
[25]ເມື່ອ ເມທູເຊລາ ອາຍຸໄດ້ ຮ້ອຍແປດສິບເຈັດປີ ເພິ່ນມີລູກຊາຍຜູ້ໜຶ່ງຊື່ ລາເມັກ. [26]ຫລັງ
ຈາກນັ້ນ ເມທູເຊລາ ມີອາຍຸຍືນຍາວມາອີກຮອດເຈັດຮ້ອຍແປດສິບສອງປີ ເພິ່ນມີລູກຊາຍ ແລະ
ຍິງຫລາຍຄົນ. [27]ແລ້ວກໍເຖິງແກ່ກຳໄປເມື່ອອາຍຸ 969 ປີ.
[28]ເມື່ອ ລາເມັກ ອາຍຸໄດ້ຮ້ອຍແປດສິບສອງປີ ເພິ່ນມີລູກຊາຍຜູ້ໜຶ່ງ. [29]ແລ້ວເວົ້າວ່າ, “ເດັກ-
ນ້ອຍຜູ້ນີ້ຈະເປັນຜູ້ປະເລົ້າປະໂລມໃຫ້ຫາຍຈາກຄວາມອິດເມື່ອຍ ຈາກການອັນທຸກຍາກຂອງ
ພວກເຮົາ ອັນສືບເນື່ອງມາຈາກ ພຣະຜູ້ເປັນເຈົ້າໄດ້ສາບແຊ່ງດິນ” ສະນັ້ນ ເພິ່ນຈຶ່ງໃສ່ຊື່ເດັກ-
ນ້ອຍນັ້ນວ່າ ໂນອາ [30]ຫລັງຈາກນັ້ນ ລາເມັກ ມີອາຍຸຍືນຍາວມາອີກຮອດ ຫາຮ້ອຍເກົ້າສິບຫ້າປີ
ເພິ່ນມີລູກຊາຍ ແລະຍິງຫລາຍຄົນ. [31]ແລ້ວກໍເຖິງແກ່ກຳໄປເມື່ອອາຍຸໄດ້ 777 ປີ.
[32]ເມື່ອ ໂນອາ ອາຍຸໄດ້ຫ້າຮ້ອຍປີ ເພິ່ນມີລູກຊາຍສາມຄົນ ຄື ເຊມ ຮາມ ແລະຢາເຟດ.

# ບົດທີ 6

## ຄວາມຊົ່ວຊ້າຂອງມະນຸດ

[1]ຢູ່ມາ ເມື່ອມະນຸດໄດ້ເພີ່ມທະວີຫລາຍຂຶ້ນໃນພື້ນແຜ່ນດິນໂລກ ແລະພວກເຂົາໄດ້ໃຫ້ກຳເນີດ
ບຸດສາວຫລາຍຄົນ. [2]ດັ່ງນັ້ນ ເທວະບຸດທັງຫລາຍທີ່ເຫັນຄວາມງາມຂອງຍິງເຫລົ່ານັ້ນກໍຫາຊອກ
ເລືອກແຕ່ງງານຕາມໃຈມັກ. [3]ເມື່ອ ພຣະຜູ້ເປັນເຈົ້າ ຊົງເຫັນເປັນເຊັ່ນນີ້ ກໍຊົງກ່າວວ່າ, “ເຮົາຈະ
ບໍ່ອະນຸຍາດໃຫ້ມະນຸດມີຊີວິດຕະຫລອດໄປເປັນນິດ ດ້ວຍເຫດວ່າ ເຂົາເປັນມະນຸດ ເຂົາຈຳເປັນ
ຕ້ອງຕາຍ ແຕ່ບັດນີ້ໄປພວກເຂົາຈະມີອາຍຸບໍ່ກາຍຮ້ອຍຊາວປີ.
[4]ໃນເວລານັ້ນ ມີຄົນຮູບຮ່າງໃຫຍ່ ແລະມີຄວາມສາມາດຫລາຍ ຄົນພວກນີ້ເກີດມາຈາກຜູ້ຍິງ
ແລະເທວະບຸດພວກເຂົາເປັນວິລະບູລຸດຜູ້ມີຊື່ສຽງໃນອະດີດຕະການ.
[5]ເມື່ອ ພຣະຜູ້ເປັນເຈົ້າ ເຫັນວ່າ ມະນຸດໂຫດຮ້າຍມີຢູ່ທຸກຫົນທຸກແຫ່ງ ແລະຄວາມຄິດຊົ່ວກໍ
ບັງຄັບຈິດໃຈເຂົາຢູ່ທຸກເວລາ. [6]ພຣະອົງຈຶ່ງເສຍພຣະໄທຫລາຍ ແລະມີຄວາມກິນແໜງຢ່າງຍິ່ງ
ທີ່ໄດ້ສ້າງພວກເຂົາຂຶ້ນມາຢູ່ໃນໂລກນີ້. [7]ດ້ວຍເຫດນີ້ພຣະອົງຈຶ່ງກ່າວວ່າ, “ເຮົາຈະທຳລາຍມະ-
ນຸດທຸກໆ ຄົນທີ່ເຮົາໄດ້ສ້າງຂຶ້ນແລ້ວໃນທຸກຫົນທຸກແຫ່ງ ເຮົາຈະທຳລາຍຝູງສັດ ແລະຝູງນົກ
ຕ່າງໆ ເພາະວ່າເຮົາເສຍໃຈທີ່ໄດ້ສ້າງມັນມາ.”
[8]ແຕ່ ພຣະຜູ້ເປັນເຈົ້າ ຊົງພໍພຣະໄທນຳ ໂນອາ ເທົ່ານັ້ນ.
[9-10]ປະຫວັດຂອງ ໂນອາ ເປັນມາດັ່ງນີ້ ເພິ່ນມີລູກຊາຍສາມຄົນຄື ເຊມ ຮາມ ແລະ ຢາເຟດ
ພຣະເຈົ້າຊົງພໍພຣະໄທນຳ ໂນອາ ເພາະເພິ່ນຜູ້ດຽວທີ່ເປັນຄົນດີແລະຕິດສະໜິດກັບພຣະອົງ.

11ແຕ່ວ່າຄົນພວກອື່ນໄດ້ກະທຳຜິດຕໍ່ນ້ຳພຣະໄທຂອງພຣະອົງ ແລ້ວຄວາມຊົ່ວຂອງມະນຸດກໍ
ໄດ້ມີຢູ່ທຸກທີ່ທຸກບ່ອນ. 12ພຣະເຈົ້າຊົງເຫັນວ່າ ໂລກນີ້ເຕັມໄປດ້ວຍຄວາມຊົ່ວ ກໍຍ້ອນວ່າມະນຸດ
ທັງປວງກະທຳແຕ່ຄວາມຊົ່ວ.

## ໂນອາສ້າງເຮືອໃຫຍ່

13ຄັນຕໍ່ມາ ພຣະເຈົ້າ ຊົງກ່າວກັບ ໂນອາ ວ່າ, "ເຮົາໄດ້ຕັດສິນໃຈຈະທຳລາຍມະນຸດສະໂລກ
ແລ້ວ ເຮົາຈະທຳລາຍພວກເຂົາຈົນໝົດສິ້ນ ເພາະວ່າໂລກນີ້ເຕັມໄປດ້ວຍການຊົ່ວຮ້າຍຂອງເຂົາ.
14ເຈົ້າຈົ່ງສ້າງເຮືອດ້ວຍໄມ້ແກ່ນອັນແໜ້ນໜາສຳລັບເຈົ້າ ຈົ່ງສ້າງເປັນຫລາຍຫ້ອງແລ້ວເອົາຂີ້ຊີ
ຢາທາງໃນ ແລະທາງນອກໃຫ້ດີ. 15ຈົ່ງສ້າງເຮືອດັ່ງກ່າວນີ້ ທາງຍາວໃຫ້ໄດ້ສາມຮ້ອຍສອກ
ທາງກວ້າງຫ້າສິບສອກ ແລະທາງສູງສາມສິບສອກ. 16ຈົ່ງເຮັດປ່ອງຢ້ຽມຈຸຫລັງຄາສູງໜຶ່ງສອກ
ຍາວຕາມຝາແລະປະຕູທາງຂ້າງເຮືອ ແລ້ວເຮັດທາງໃນເຮືອໃຫ້ເປັນສາມຊັ້ນ. 17ເຮົາຈະໃຫ້ນ້ຳ
ມາຖ້ວມໂລກ ແລະທຳລາຍທຸກສິ່ງທີ່ມີຊີວິດຢູ່ ທຸກໆ ສິ່ງໃນໂລກນີ້ ຈະຕາຍໄປ. 18ແຕ່ວ່າເຮົາ
ຈະຕັ້ງຄຳໝັ້ນສັນຍາໄວ້ກັບເຈົ້າ ສະນັ້ນ ຈົ່ງເອົາເມຍ ລູກຊາຍ ແລະລູກໄພ້ຂອງເຈົ້າເຂົ້າໄປໃນ
ເຮືອ. 19-20ພ້ອມທັງເອົາສັດທຸກໆ ຊະນິດແນວລະຄູ່ ນົກທຸກໆ ຊະນິດແນວລະຄູ່ ສັດໃຊ້ງານ
ສັດເລືອ ສັດໃຫຍ່ ສັດນ້ອຍທຸກໆ ຊະນິດແນວລະຄູ່ເພື່ອໃຫ້ສັດເຫລົ່ານັ້ນມີຊີວິດຢູ່. 21ຢ່າລືມ
ເອົາອາຫານຫລາຍໆ ຊະນິດສຳລັບຄອບຄົວຂອງເຈົ້າ ແລະສຳລັບສັດເຫລົ່ານັ້ນດ້ວຍ."
22ໂນອາ ກໍເຮັດທຸກຢ່າງຕາມທີ່ພຣະເຈົ້າໄດ້ສັ່ງໄວ້.

# ບົດທີ 7

## ນ້ຳຖ້ວມໂລກ

1ພຣະຜູ້ເປັນເຈົ້າຊົງກ່າວຕໍ່ໂນອາວ່າ, "ເຈົ້າພ້ອມຄອບຄົວຂອງເຈົ້າທັງໝົດຈົ່ງເຂົ້າໄປໃນເຮືອ
ເຮົາເຫັນແລ້ວວ່າ ເຈົ້າເປັນຜູ້ຊອບທຳແລະແມ່ນເຈົ້າຜູ້ດຽວໃນຈຳນວນພວກປະຊາຊົນເຫລົ່ານັ້ນທີ່
ເຮົາພໍໃຈ. 2ຈົ່ງເອົາສັດທີ່ບໍ່ມີມົນທິນແນວລະເຈັດຄູ່ ແລະເອົາສັດທີ່ມີມົນທິນແນວລະຄູ່. 3ນົກ
ຊະນິດລະເຈັດຄູ່ ເພາະເຮົາຢາກໃຫ້ສັດເຫລົ່ານີ້ມີຊີວິດຢູ່ ແລະອອກແມ່ແຜ່ລູກຕໍ່ໄປໃນໂລກ.
4ໃນເຈັດມື້ຂ້າງໜ້ານີ້ເຮົາຈະໃຫ້ຝົນຕົກລົງມາໃນໂລກສີ່ສິບມື້ສີ່ສິບຄືນ ແລ້ວເຮົາຈະໃຫ້ທຸກສິ່ງທີ່ມີ
ຊີວິດ ຊຶ່ງເຮົາໄດ້ສ້າງມານັ້ນຈິບຫາຍໄປ."
5ໂນອາ ກໍໄດ້ເຮັດທຸກສິ່ງທຸກຢ່າງຕາມທີ່ພຣະຜູ້ເປັນເຈົ້າຊົງສັ່ງ.
6ຄາວນ້ຳຖ້ວມໂລກຢູ່ນັ້ນ ໂນອາມີອາຍຸຫົກຮ້ອຍປີ. 7-9ໂນອາພ້ອມດ້ວຍເມຍ ລູກຊາຍແລະ
ລູກໄພ້ທັງຫລາຍຕະຫລອດທັງສັດທີ່ບໍ່ມີມົນທິນແລະສັດທີ່ມີມົນທິນ ນົກແລະສັດນ້ອຍທຸກຊະນິດ
ແນວລະຄູ່ ໄດ້ພາກັນເຂົ້າໄປໃນເຮືອ ເພື່ອຫລີກເວັ້ນຈາກນ້ຳຖ້ວມ ຕາມທີ່ພຣະເຈົ້າໄດ້ຊົງສັ່ງ
ໄວ້. 10ຫລັງຈາກເຈັດມື້ແລ້ວຝົນກໍໄດ້ຕົກລົງຖ້ວມໂລກ.
11ໃນວັນທີສິບເຈັດ ເດືອນທີສອງ ເມື່ອໂນອາມີອາຍຸຫົກຮ້ອຍປີ ຟ້າກໍມືດຄຶ້ມແລ້ວຖອກເທ
ຫ່າຝົນລົງມາສູ່ໂລກ ນ້ຳໃນບໍ່ໃນເຫວ ແລະຫ້ວຍຮ່ອງກໍຫັ່ງຂຶ້ນມາ. 12ຝົນຕົກບໍ່ຂາດສາຍໃນ
ແຜ່ນດິນໂລກ ສີ່ສິບມື້ສີ່ສິບຄືນ.

13ໃນມື້ທີ່ຝົນເລີ້ມຕົກນັ້ນ ໂນອາພ້ອມດ້ວຍເມຍແລະລູກຊາຍສາມຄົນ ຄື ເຊມ ຮາມ ຢາ-
ເຟດ ກັບເມຍຂອງພວກເຂົາ. 14-15ພ້ອມທັງສັດທຸກຊະນິດສັດປ່າ ສັດບ້ານ ສັດໃຫຍ່ ສັດນ້ອຍ
ແລະນົກ ໝູທຸກຊະນິດແນວລະຄູ່ກໍພາກັນເຂົ້າໄປຢູ່ໃນເຮືອ. 16ຕາມທີ່ພຣະເຈົ້າຊົງສັ່ງແລ້ວ
ພຣະອົງກໍຊົງອັດປະຕູເຮືອ.

17ຄັນແລ້ວ ຝົນກໍເລີ້ມຕົກບໍ່ຂາດສາຍຕະຫລອດສີ່ສິບມື້ສີ່ສິບຄືນ ນໍ້າກໍສູງຂຶ້ນເລື້ອຍໆ
18-20ເຮືອຂອງໂນອາຟູຢູ່ເທິງໜ້ານໍ້າ ນໍ້າກໍສູງຂຶ້ນເລື້ອຍໆຈົນ ພູຜາໜ່ວຍສູງໆ ກໍຖືກນໍ້າຖ້ວມ
ແລະນໍ້າຍັງໄດ້ຖ້ວມພູຜາເຫລົ່ານັ້ນຂຶ້ນໄປອີກສິບຫ້າສອກ. 21ທຸກໆ ສິ່ງທີ່ມີຊີວິດຢູ່ໃນໂລກ ຄື
ນົກ ສັດທຸກຊະນິດ ຕະຫລອດທັງຄົນກໍຈົມນໍ້າຕາຍໝົດ. 22ທຸກໆສິ່ງທີ່ຫັນໃຈໄດ້ເທິງແຜ່ນດິນ
ໂລກໄດ້ຕາຍໄປ. 23ພຣະຜູ້ເປັນເຈົ້າໄດ້ທຳລາຍທຸກສິ່ງທີ່ມີຊີວິດຢູ່ເທິງແຜ່ນດິນໂລກເຊັ່ນ: ມະ-
ນຸດ, ສັດ, ແລະນົກ. ເວັ້ນໄວ້ແຕ່ຄອບຄົວຂອງໂນອາ ແລະສັດທີ່ມີຢູ່ໃນເຮືອເທົ່ານັ້ນ 24ນໍ້າໄດ້
ຖ້ວມໂລກຢູ່ເປັນເວລາຮ້ອຍຫ້າສິບມື້.

# ບົດທີ 8

## ນໍ້າບົກລົງ

1ຫລັງຈາກນໍ້າຖ້ວມໂລກໄດ້ຮ້ອຍຫ້າສິບມື້ແລ້ວ ພຣະເຈົ້າຍັງບໍ່ລືມໂນອາພ້ອມທັງສັດຕ່າງໆ
ທີ່ຢູ່ໃນເຮືອ ພຣະອົງຊົງເຮັດໃຫ້ມີລົມພັດມາເທິງໜ້າໂລກ ແລ້ວນໍ້າກໍຄ່ອຍບົກລົງ. 2ທ້ອງຟ້າກໍ
ເລີ້ມແຈ່ມໃສຂຶ້ນ ຝົນກໍເຊົາຕົກ. 3-4ນໍ້າໃນບໍ່ ໃນເຫວ ແລະຫ້ວຍຮ່ອງກໍຫລຸດນ້ອຍຖອຍລົງເປັນ
ລຳດັບໃນມື້ວັນທີສິບເຈັດຂອງເດືອນເຈັດ. ເຮືອຂອງໂນອາໄດ້ຄ້າງຢູ່ເທິງພູອາຣາຣັດ 5ນໍ້າໄດ້
ບົກລົງເລື້ອຍໆ ຈົນມື້ວັນທີໜຶ່ງຂອງເດືອນສິບຍອດພູທັງຫລາຍຈຶ່ງໄດ້ປະກົດຂຶ້ນ.

6-7ຢູ່ຕໍ່ມາອີກສີ່ສິບວັນ ໂນອາໄດ້ໄຂປ່ອງຢ້ຽມເຮືອອອກແລ້ວໄດ້ປ່ອຍກາໂຕໜຶ່ງອອກໄປ ກາ
ໂຕນັ້ນໄດ້ບິນໄປມາຈົນນໍ້າແຫ້ງ

8ໂນອາ ກໍໄດ້ປ່ອຍນົກກາງແກໂຕໜຶ່ງອອກໄປອີກເພື່ອຈະໄດ້ຮູ້ວ່າ ນໍ້າບົກແລ້ວຫລືຍັງ. 9ແຕ່
ວ່ານົກກາງແກໂຕນັ້ນບໍ່ມີບ່ອນຈະຈັບຈຶ່ງໄດ້ກັບຄືນມາຫາເພິ່ນເພາະວ່ານໍ້າຍັງຖ້ວມໂລກຢູ່ ພໍ-
ເຫັນນົກບິນກັບມາ ໂນອາໄດ້ເດ່ມືອອກໄປຈັບເອົານົກກາງແກໂຕນັ້ນມາໄວ້ໃນເຮືອນຳໝູ່.
10ເຈັດມື້ຕໍ່ມາເພິ່ນໄດ້ປ່ອຍນົກກາງແກອອກໄປອີກ. 11ນົກກາງແກໂຕນັ້ນໄດ້ບິນກັບມາໃນຕອນ
ແລງພ້ອມທັງຄາບເອົາໃບໝາກກອກມານຳ ເມື່ອເຫັນເຊັ່ນນີ້ ເພິ່ນຈຶ່ງຮູ້ຄັກແນ່ວ່ານໍ້າໄດ້ບົກລົງ
ແລ້ວ. 12ເຈັດມື້ຕໍ່ມາເພິ່ນໄດ້ປ່ອຍນົກກາງແກອອກໄປອີກ ແຕ່ເທື່ອນີ້ນົກໂຕນັ້ນບໍ່ເຫັນກັບມາ
ເລີຍ.

13ເມື່ອໂນອາມີອາຍຸໄດ້ຫົກຮ້ອຍໜຶ່ງປີ ໃນວັນທີໜຶ່ງຂອງເດືອນທີໜຶ່ງຂອງປີນັ້ນ ນໍ້າກໍໄດ້
ແຫ້ງລົງໝົດ ຫລັງຈາກເພິ່ນໄດ້ເປີດຫລັງຄາເຮືອອອກແລ້ວກໍເຫັນວ່າໜ້າດິນໄດ້ແຫ້ງແລ້ວ.
14ສະນັ້ນ ໃນວັນທີຊາວເຈັດຂອງເດືອນທີສອງ ແຜ່ນດິນໂລກກໍແຫ້ງໝົດແລ້ວ.

15-16ແລ້ວພຣະເຈົ້າຊົງກ່າວແກ່ໂນອາວ່າ, “ເຈົ້າພ້ອມທັງເມຍລູກຊາຍ ແລະລູກໃພ້ ຈົ່ງພາ-
ກັນອອກຈາກເຮືອນັ້ນສາ. 17ຈົ່ງປ່ອຍສັດທັງຫລາຍທີ່ຢູ່ໃນເຮືອ ຄື ສັດບ້ານ ສັດປ່າ ສັດເລືອ

ຄານ ນົກໜູອອກມາເພື່ອໃຫ້ມັນອອກແມ່ແຜ່ລູກຫລາຍຂຶ້ນຢູ່ໃນໂລກນີ້."
[18]ດັ່ງນັ້ນ ໂນອາພ້ອມທັງເມຍລູກຊາຍ ແລະລູກໃພ້ກໍພາກັນອອກຈາກເຮືອ. [19]ສ່ວນສັດບ້ານ
ສັດປ່າ ສັດເລືອຄານ ແລະ ນົກໜູ ກໍພາກັນອອກມາຈາກເຮືອ ຕາມຊະນິດຂອງມັນເໝືອນກັນ.

## ໂນອາຖວາຍເຄື່ອງບູຊາ

[20]ຄັນຕໍ່ມາໂນອາໄດ້ສ້າງແທ່ນບູຊາຖວາຍແດ່ພຣະຜູ້ເປັນເຈົ້າ ເພິ່ນໄດ້ເອົາສັດ ແລະນົກທີ່ບໍ່
ມີມົນທິນ ມາຂ້າເຜົາຖວາຍເທິງແທ່ນບູຊານັ້ນ. [21]ເມື່ອພຣະຜູ້ເປັນເຈົ້າຊົງໄດ້ຮັບກິ່ນຫອມຫວນ
ເຊັ່ນນັ້ນແລ້ວພຣະອົງຊົງຄິດວ່າ, "ເຮົາຈະບໍ່ດ່າສາບແຊ່ງໂລກນີ້ຍ້ອນມະນຸດອີກ ເພາະເຮົາຮູ້
ແລ້ວວ່າ ຄວາມຄິດຊົ່ວຊ້າຂອງມະນຸດມີມາແຕ່ເວລາຍັງນ້ອຍ ເຮົາຈະບໍ່ທຳລາຍສິ່ງທີ່ມີຊີວິດ
ເໝືອນດັ່ງທີ່ເຮົາໄດ້ທຳລາຍອີກແລ້ວ.

[22] ຕາບໃດທີ່ໂລກຍັງຄົງຢູ່
ຍາມຫວ່ານກ້າແລະຍາມເກັບກ່ຽວ
ລະດູໜາວແລະລະດູຮ້ອນ ກາງເວັນແລະກາງຄືນ
ຈະມີຢູ່ສືບໆໄປ."

# ບົດທີ 9

## ພຣະເຈົ້າຊົງສັນຍາກັບໂນອາ

[1]ພຣະເຈົ້າຊົງອວຍໄຊໃຫ້ພອນແກ່ໂນອາ ພ້ອມທັງລູກຊາຍທັງສາມຄົນຂອງເພິ່ນວ່າ, "ໃຫ້
ພວກເຈົ້າມີລູກເຕົ້າມາກຫະວີຂຶ້ນທົ່ວແຜ່ນດິນໂລກ. [2]ສັດທຸກໆຊະນິດໃນໂລກຄື ສັດໃຊ້ງານ
ສັດເລືອຄານ ສັດໃຫຍ່ ສັດນ້ອຍ ນົກ ໜູ ແລະປູປານາໆ ຊະນິດ ຈະຢ້ານກົວ ແລະຢູ່ໃຕ້ອຳ-
ນາດຂອງເຈົ້າ. [3]ແຕ່ບັດນີ້ໄປສັດທຸກໆ ຊະນິດ ແລະພືດທຸກໆ ຢ່າງ ພວກເຈົ້າກິນໄດ້ເພາະເຮົາ
ໄດ້ປະທານສິ່ງນັ້ນໃຫ້ເປັນອາຫານແກ່ພວກເຈົ້າ.
[4]ແຕ່ມີສິ່ງທີ່ເຈົ້າບໍ່ຄວນກິນ ຄື ເລືອດ ຊຶ່ງເປັນຊີວິດ. [5]ຖ້າຜູ້ໃດຂ້າເຈົ້າ ເຮົາຈະລົງໂທດຜູ້ນັ້ນ
ເຖິງຕາຍ ເຮົາຈະທຳລາຍສັດທຸກໂຕທີ່ຂ້າເຈົ້າ ແລະເຮົາຈະລົງໂທດທຸກໆ ຄົນທີ່ຂ້າເພື່ອນມະ-
ນຸດດ້ວຍກັນ.

[6] ຜູ້ໃດຂ້າເພື່ອນສັນໃດ
ຜູ້ນັ້ນຈະຖືກເພື່ອນຂ້າສັນນັ້ນ
ເພາະວ່າພຣະເຈົ້າໄດ້ຊົງສ້າງມະນຸດ
ຕາມຮູບຮ່າງຂອງພຣະອົງ.

[7]ສະນັ້ນ ພວກເຈົ້າຈົ່ງສືບໜໍ່ແທນແນວໃຫ້ມາກຫລາຍ ເພື່ອໃຫ້ເຊື້ອສາຍຂອງພວກເຈົ້າແຜ່-
ຜາຍໄປທົ່ວທຸກແຫ່ງໃນໂລກ."
[8]ພຣະເຈົ້າຊົງສັນຍາກັບໂນອາແລະລູກຊາຍຂອງເພິ່ນວ່າ, [9]"ແຕ່ບັດນີ້ເປັນຕົ້ນໄປ ເຮົາສັນ-
ຍາຕໍ່ເຈົ້າ ເຊື້ອສາຍຂອງເຈົ້າ. [10]ແລະສັດທຸກຊະນິດທີ່ອອກມາຈາກເຮືອເຊັ່ນ ນົກໜູ ສັດບ້ານ
ສັດປ່າວ່າ, [11]ດ້ວຍຄຳໝັ້ນສັນຍາທີ່ເຮົາຕັ້ງໄວ້ເຮົາຈະບໍ່ທຳລາຍທຸກໆ ສິ່ງທີ່ມີຊີວິດດ້ວຍນ້ຳ ນ້ຳ

ຖ້ວມໂລກເຊັ່ນນີ້ຈະບໍ່ມີອີກຈັກເທື່ອ.
[12-13]ພຣະເຈົ້າຊົງກ່າວຕື່ມອີກວ່າ, “ເຮົາຕັ້ງຮຸ້ງກິນນໍ້າໄວ້ເພື່ອເປັນເຄື່ອງໝາຍສຳຄັນຂອງຄຳ-
ໝັ້ນສັນຍາຕະຫລອດໄປເປັນນິດຊຶ່ງເຮົາໄດ້ກະທຳຕໍ່ເຈົ້າ ແລະສັດຕ່າງໆ ຮຸ້ງກິນນໍ້າຈະເປັນ
ເຄື່ອງໝາຍສຳຄັນຂອງຄຳໝັ້ນສັນຍາທີ່ເຮົາໄດ້ຕັ້ງໄວ້ກັບໂລກ. [14]ຫາກເມື່ອໃດເຮົາໄດ້ເຮັດໃຫ້ມີ
ເມກປົກຫຸ້ມທົ່ວແຜ່ນດິນໂລກ ແລະເຮັດໃຫ້ມີຮຸ້ງປະກົດຂຶ້ນໃນເມກ. [15]ແລ້ວເຮົາກໍຈະຄິດເຖິງ
ຄຳໝັ້ນສັນຍາຂອງເຮົາທີ່ໄດ້ໃຫ້ແກ່ເຈົ້າ ແລະສັດທັງປວງວ່າຈະບໍ່ທຳລາຍທຸກໆ ສິ່ງທີ່ມີຊີວິດ
ດ້ວຍນໍ້າອີກ. [16]ເມື່ອຮຸ້ງປະກົດຂຶ້ນໃນເມກເຮົາກໍຈະໄດ້ເຫັນ ແລະຈະໄດ້ລະນຶກເຖິງຄຳໝັ້ນສັນ-
ຍາຕະຫລອດໄປເປັນນິດລະຫວ່າງເຮົາກັບທຸກໆ ສິ່ງທີ່ມີຊີວິດຢູ່ໃນໂລກ.”
[17]ພຣະເຈົ້າໄດ້ກ່າວຕໍ່ໂນອາວ່າ, “ນີ້ແຫລະຄືເຄື່ອງໝາຍສຳຄັນຂອງຄຳໝັ້ນສັນຍາ ຊຶ່ງເຮົາ
ໄດ້ກະທຳຕໍ່ທຸກໆ ສິ່ງທີ່ມີຊີວິດຢູ່ໃນໂລກ.”

## ໂນອາແລະລູກຊາຍ

[18]ລູກຊາຍຂອງໂນອາທີ່ໄດ້ອອກມາຈາກເຮືອຄື ເຊມ ຮາມ ແລະຢາເຟດ. ຮາມເປັນພໍ່
ຂອງການາອານ. [19]ລູກຊາຍທັງສາມຂອງເພິ່ນໄດ້ເປັນບັນພະບູລຸດຂອງປະເທດຊາດທັງປວງ
ໃນໂລກ.
[20-21]ໂນອາຊຶ່ງມີອາຊີບເປັນພໍ່ນາ ເປັນຜູ້ທຳອິດທີ່ປູກຕົ້ນອະງຸ່ນ ມື້ໜຶ່ງເພິ່ນດື່ມນໍ້າອະງຸ່ນ
ຫລາຍຈົນມຶນເມົາຈົນຫລົງແກ້ເຄື່ອງນຸ່ງຫົ່ມຂອງຕົນອອກແລ້ວນອນເປືອຍກາຍຢູ່ໃນຜ້າເຕັນ.
[22]ເມື່ອຮາມພໍ່ຂອງການາອານເຫັນພໍ່ຂອງຕົນນອນເປືອຍກາຍຢ່າງມຶນເມົາຢູ່ເຊັ່ນນັ້ນ ກໍຟ້າວໄປ
ບອກອ້າຍທັງສອງມາ. [23]ເມື່ອເຊມແລະຢາເຟດໄດ້ຍິນຄຳບອກເລົ່າຂອງຮາມຜູ້ເປັນນ້ອງຈຶ່ງ
ຟ້າວພາກັນມາທີ່ຜ້າເຕັນນັ້ນ ພ້ອມກັບຖືເອົາເສື້ອຜືນໜຶ່ງພາດໃສ່ບ່າ ຄັນມາຮອດຜ້າເຕັນຂອງພໍ່
ແລ້ວ ພວກເຂົາກໍຍ່າງຖອຍຫລັງເຂົ້າມາຫາພໍ່ແລ້ວເອົາເສື້ອທີ່ພາດຢູ່ເທິງບ່ານັ້ນປົກຕົວພໍ່ໄວ້
ເພາະບໍ່ຢາກເຫັນພໍ່ຢູ່ໃນສະພາບເປືອຍກາຍເຊັ່ນນັ້ນ.
[24]ເມື່ອໂນອາຕື່ນແຕ່ນອນ ແລະຊວ່າງເຫລົ້າແລ້ວກໍຮູ້ຈັກສິ່ງທີ່ລູກຊາຍຫລ້າໄດ້ກະທຳຕໍ່ຕົນ.
[25]ເພິ່ນຈຶ່ງຮ້ອງຂຶ້ນວ່າ:

“ກູຂໍສາບແຊ່ງການາອານ
  ມັນຈະເປັນຂ້ອຍຂ້າຂອງອ້າຍມັນ.”

[26]ເພິ່ນກ່າວອີກວ່າ,

“ຂໍສັນລະເສີນພຣະຜູ້ເປັນເຈົ້າຜູ້ເປັນພຣະເຈົ້າຂອງເຊມ
  ການາອານຈະເປັນຂ້ອຍຂ້າຂອງເຊມ.”
[27] ຂໍພຣະເຈົ້າຊົງໂຜດໃຫ້ຢາເຟດຈະເລີນຮັ່ງມີສົມບູນຂຶ້ນ
  ແລະຂໍໃຫ້ເຊື້ອສາຍຂອງລາວ ຈົ່ງຢູ່ຮ່ວມກັນ
ກັບປະຊາຊົນຂອງເຊມການາອານຈົ່ງຕົກເປັນ
  ຂ້ອຍຂ້າຂອງຢາເຟດ.”

[28]ຫລັງຈາກນໍ້າຖ້ວມໂລກແລ້ວ ໂນອາມີອາຍຸຕໍ່ມາອີກ ສາມຮ້ອຍຫ້າສິບປີ. [29]ເພິ່ນຈຶ່ງເຖິງແກ່

ກໍາໄປເມື່ອອາຍຸໄດ້ 950 ປີ.

# ບົດທີ 10

## ເຊື້ອສາຍຂອງລູກຊາຍໂນອາ

1ຕໍ່ໄປນີ້ແມ່ນເຊື້ອສາຍລູກຊາຍໂນອາ ຄື ເຊມ ຮາມ ແລະຢາເຟດ ລູກຊາຍຂອງພວກເຂົາ
ໄດ້ເກີດຫລັງຈາກນໍ້າຖ້ວມໂລກ.

2ລູກຊາຍຂອງຢາເຟດມີຄື ໂກເມ ມາໂຄກ ມາດາຍ ຢາວານ ຕູບານ ເມເຊັກ ແລະຕີ-
ຣາດ. 3ລູກຊາຍຂອງໂກເມຄື ອັດຊະເກນາດ ຣິຟາດ ແລະໂຕກາມາ. 4ລູກຊາຍຂອງຢາ-
ວານ ຄື ເອລີຊາ ຕາຊິດ ຊາວກິດຕິມ ແລະຊາວໂດດານິມ. 5ພວກເຂົາເຫລົ່ານີ້ເປັນບັນພະ-
ບູລຸດຂອງປະຊາຊົນທີ່ອາໄສຢູ່ຕາມແຄມດອນ ແລະຕາມແຄມທະເລ ພວກນີ້ເປັນເຊື້ອສາຍຂອງ
ຢາເຟດ ຊຶ່ງອາໄສຢູ່ໃນເຜົ່າ ແລະໃນປະເທດແຕກຕ່າງກັນ ແຕ່ລະໝວດໝູ່ ປາກພາສາຂອງ
ພວກເຂົາເອງ.

6ລູກຊາຍຂອງຮາມ ຄື ກູເຊ ມິດຊະຣາຢິມ[ກ] ປຸດແລະການາອານ.

7ລູກຊາຍຂອງກູເຊ ຄື ເຊບາ ຮາວິລາ ສັບຕາ ຣາອາມາ ແລະສັບເຕກາ.

ລູກຊາຍຂອງຣາອາມາຄື ເຊບາແລະເດດານ

8ກູເຊມີລູກຊາຍອີກຜູ້ໜຶ່ງ ຊື່ວ່າ ນິມໂຣດ. ລາວເປັນຜູ້ປົກຄອງຜູ້ຍິ່ງໃຫຍ່ຄົນທໍາອິດໃນໂລກ
9ລາວຍັງເປັນນາຍພານຜູ້ຍິ່ງໃຫຍ່ໃນໂລກອີກ ດ້ວຍເຫດນີ້ ຈຶ່ງມີຄໍາເວົ້າເລົ່າລືກັນມາວ່າ, “ເປັນ
ນາຍພານຜູ້ຍິ່ງໃຫຍ່ເໝືອນດັ່ງນິມໂຣດ.” 10ລາຊະອານາຈັກທໍາອິດທີ່ນິມໂຣດປົກຄອງມີຄື ບາ-
ເບນ ເອເຣັກ ແລະອັກກາດ ລາຊະອານາຈັກເຫລົ່ານີ້ຢູ່ໃນປະເທດຊີນາ. 11ອັດຊີເຣຍ ອອກ
ຈາກປະເທດຊີນາໄປ ສ້າງເມືອງນີເນເວ ເຣໂຮໂບດ-ອີເຣ ກາລາ 12ແລະເຣເສັນຊຶ່ງຢູ່ລະ-
ຫວ່າງເມືອງໃຫຍ່ກາລາ.

13ມິດຊະຣາຢິມເປັນພໍ່ຂອງລູດີ ອານາມິມ ເລຮາບິມ ນັບຕູຮິມ 14ປັດຣູສີ ກັດສະລູຮິມ
ແລະກັບໂຕຣີ ພວກນີ້ໄດ້ສືບເຊື້ອສາຍໃຫ້ພວກ ຟີລິດສະຕິນ.

15ລູກຊາຍກົກຂອງການາອານຊື່ ຊີໂດນ ແລະຜູ້ຕໍ່ມາແມ່ນເຮດ 16ແລະຊາວເຢບຸດ ຊາວ
ອະໂມຣິດ ຊາວກີກາຊີ 17-18ຊາວຮີວີ ຊາວອາກີ ຊາວສີນີ ຊາວອາວາດ ຊາວເຊມາແລະ
ຊາວຮາມັດ ພາຍລຸນມາເຊື້ອສາຍຂອງການາອານໄດ້ແຜ່ກວ້າງອອກໄປ. 19ຈົນເຂດແດນຂອງ
ພວກເຂົາຮອດຊີໂດນທາງເບື້ອງເມືອງເກຣາ ເມືອງຄາຊາ ແລະຂ້າງເມືອງໂຊໂດມ ຮອດ
ເມືອງໂກໂມຣາ ເມືອງອັດມາ ແລະ ເຊໂບຢິມຮອດເມືອງລາຊາ. 20ພວກເຫລົ່ານີ້ແມ່ນເຊື້ອ-
ສາຍຂອງຮາມ ຊຶ່ງອາໄສຢູ່ເປັນໝູ່ໝວດເຜົ່າ ແລະປະເທດ ແຕ່ລະໝູ່ໝວດປາກເວົ້າພາສາ
ຂອງຕົນເອງ.

21ເຊມຜູ້ຊຶ່ງເປັນບັນພະບູລຸດຂອງເດັກນ້ອຍຊາວເຮເບ ແລະຜູ້ຊຶ່ງເປັນອ້າຍກົກຂອງຢາເຟດ
ກໍມີລູກຫລານຫລາຍເຊັ່ນດຽວກັນ.

---

[ກ]ມິດຊະຣາຢິມ ເປັນຊື່ອື່ນສໍາລັບ ເອຢິບ

22ລູກຊາຍຂອງເຊມຄື ເອລາມ ອັດຊີເຣຍ ອາປັກຊາດ ລູດແລະອາຣາມ. 23ລູກຊາຍ
ຂອງອາຣາມຄື ອູເຊ ຮຸນ ເກເທແລະມາເຊ. 24ອາປັກຊາດເປັນພໍ່ຂອງເຊລາແລະເຊລາເປັນ
ພໍ່ຂອງເຮເບ ເຮເບມີລູກຊາຍສອງຄົນ. 25ຜູ້ອ້າຍຊື່ເປເລັກ ກ່ອນຈະໃສ່ຊື່ນີ້ ກໍເພາະວ່າ ໃນ
ສະໄໝຂອງເພິ່ນ ປະຊາຊົນໃນໂລກຖືກແບ່ງແຍກກັນ ນ້ອງຊາຍຂອງເພິ່ນຊື່ ໂຢກຕານ.
26ໂຢກຕານມີລູກຊາຍຫລາຍຄົນຄື ອານໂມດາດ ເຊເລັບ ຮາຊາມາເວດ ເຢຣາ 27-29ຮາໂດ-
ຣາມ ອູຊານ ດິກລາ ໂອບານ ອາບີມາເອນ ເຊບາ ໂອຟີ ຮາວິລາແລະໂຢບັບ. 30ດິນແດນ
ທີ່ພວກເຂົາອາໄສຢູ່ນັ້ນມີຕັ້ງແຕ່ເມຊາຂ້າງເບື້ອງເສຟາ ຈົນເຖິງພູເຂົາທາງທິດຕາເວັນອອກ.
31ພວກເຫລົ່ານີ້ແມ່ນເຊື້ອສາຍຂອງເຊມ ຊຶ່ງໄດ້ອາໄສຢູ່ເປັນໝູ່ໝວດເຜົ່າ ແລະປະເທດ ແຕ່ລະ
ໝູ່ໝວດນັ້ນ ປາກເວົ້າພາສາຂອງຕົນເອງ.

32ທຸກໆເຜົ່າ ແລະໝູ່ໝວດທີ່ກ່າວມານັ້ນ ແມ່ນເຊື້ອສາຍທີ່ສືບມາຈາກພວກລູກຊາຍຂອງໂນ-
ອາ ທີ່ມາຈາກເຊື້ອສາຍຕ່າງໆກັນ. ປະຊາຊົນທຸກໆຄົນໃນຊາດຕ່າງໆໃນໂລກນີ້ ແມ່ນສືບ
ເຊື້ອສາຍມາຈາກໂນອາ ແລະຈາກລູກຊາຍຂອງເພິ່ນພາຍຫລັງຈາກນໍ້າຖ້ວມໂລກ.

# ບົດທີ 11

## ຫໍຄອຍເມືອງບາເບນ

1ແຕ່ທຳອິດ ມະນຸດໃນໂລກເວົ້າພາສາດຽວກັນ ແລະໃຊ້ຄຳເວົ້າແບບດຽວກັນ. 2ຢູ່ມາເມື່ອ
ພວກເຂົາໄດ້ຍົກຍ້າຍໄປທາງທິດຕາເວັນອອກພວກເຂົາຈຶ່ງພົບທົ່ງຮາບພຽງແຫ່ງໜຶ່ງໃນປະເທດ
ຊີນາ ແລ້ວໄດ້ຕັ້ງຖິ່ນຖານຢູ່ທີ່ນັ້ນ. 3ພວກເຂົາໄດ້ເວົ້າວ່າ, “ເອົາເທາະ! ພວກເຮົາພາກັນປັ້ນ
ດິນຈີ່ ແລ້ວເຜົາໃຫ້ມັນແຂງດີ” ດັ່ງນັ້ນ ພວກເຂົາຈຶ່ງມີດິນຈີ່ສຳລັບກໍ່ສ້າງ ແລະມີຢາງໃຊ້ຕາງ
ປະທາຍ. 4ແລ້ວພວກເຂົາເວົ້າວ່າ, “ບັດນີ້ ພວກເຮົາພາກັນສ້າງເມືອງຂອງພວກເຮົາ ພ້ອມທັງກໍ່
ຫໍຄອຍໃຫ້ມີຍອດສູງຈຸຟ້າພວກເຮົາຄວນສ້າງຊື່ສຽງໄວ້ ເພື່ອເຮົາຈະບໍ່ໄດ້ພັດພາກຈາກກັນໄປໃນ
ໂລກນີ້.”

5ແລ້ວພຣະອົງຈຶ່ງສະເດັດລົງມາທອດພຣະເນດເມືອງແລະຫໍຄອຍສູງທີ່ມະນຸດໄດ້ສ້າງຂຶ້ນ.
6ພຣະອົງຊົງກ່າວວ່າ, “ບັດນີ້ ມະນຸດທ້ອນໂຮມກັນເປັນອັນໜຶ່ງອັນດຽວ ເຂົາເວົ້າພາສາດຽວກັນ
ນີ້ກໍເປັນພຽງຂັ້ນເລີ່ມຕົ້ນທີ່ເຂົາໄດ້ກະທຳມາ ໃນຂັ້ນຕໍ່ໄປ ພວກເຂົາກໍຈະສາມາດເຮັດທຸກສິ່ງທຸກ
ຢ່າງທີ່ເຂົາປາຖະໜາຢາກເຮັດ. 7ສະນັ້ນ ເຮົາຕ້ອງລົງໄປເຮັດໃຫ້ພາສາຂອງເຂົາແຕກຕ່າງກັນ
ເພື່ອພວກເຂົາຈະເວົ້າບໍ່ເຂົ້າໃຈກັນອີກ.”

8ແລ້ວພຣະຜູ້ເປັນເຈົ້າ ຊົງເຮັດໃຫ້ພວກເຂົາພັດພາກຈາກກັນໄປຢູ່ທົ່ວທຸກແຫ່ງໃນໂລກພວກ
ເຂົາຈຶ່ງເຊົາສ້າງເມືອງນັ້ນ. 9ດ້ວຍເຫດນັ້ນ ເມືອງນີ້ຈຶ່ງມີຊື່ວ່າບາເບນ ເພາະວ່າບ່ອນນີ້ເປັນ
ບ່ອນທີ່ພຣະຜູ້ເປັນເຈົ້າ ໄດ້ຊົງເຮັດໃຫ້ພາສາຂອງເຂົາແຕກຕ່າງກັນ ແລະເຮັດໃຫ້ມະນຸດພັດ
ພາກຈາກກັນໄປທົ່ວທຸກແຫ່ງໃນໂລກ.

## ເຊື້ອສາຍຂອງເຊມ

10ເຊື້ອສາຍຂອງເຊມມີຄວາມເປັນມາດັ່ງນີ້ ເມື່ອສອງປີຫລັງຈາກນໍ້າຖ້ວມໂລກ. 11ເຊມມີ

ອາຍຸໄດ້ຮ້ອຍປີ ເພິ່ນຈຶ່ງມີລູກຊາຍຜູ້ໜຶ່ງຊື່ ອາປັກຊາດ ຕັ້ງແຕ່ໄດ້ອາປັກຊາດມາ ເພິ່ນກໍມີອາ-
ຍຸຕໍ່ມາອີກ ຫ້າຮ້ອຍປີແລະກໍມີລູກຊາຍຍິງຕື່ມອີກຫລາຍຄົນ.
12ເມື່ອ ອາປັກຊາດ ມີອາຍຸໄດ້ສາມສິບຫ້າປີ ເພິ່ນມີລູກຊາຍຜູ້ໜຶ່ງຊື່ ເຊລາ. 13ຕັ້ງແຕ່ໄດ້ ເຊລາ
ມາ ເພິ່ນກໍມີອາຍຸຕໍ່ມາອີກສີ່ຮ້ອຍສາມປີ ແລະມີລູກຊາຍຍິງຕື່ມອີກຫລາຍຄົນ.
14ເມື່ອ ເຊລາ ມີອາຍຸໄດ້ສາມສິບປີ ເພິ່ນມີລູກຊາຍຜູ້ໜຶ່ງຊື່ ເຮເບ. 15ຕັ້ງແຕ່ໄດ້ ເຮເບ ມາ ເພິ່ນ
ກໍມີອາຍຸຕໍ່ມາອີກສີ່ຮ້ອຍສາມປີ ແລະມີລູກຊາຍຍິງຕື່ມອີກຫລາຍຄົນ.
16ເມື່ອ ເຮເບ ມີອາຍຸໄດ້ສາມສິບປີ ເພິ່ນມີລູກຊາຍຜູ້ໜຶ່ງຊື່ ເປເລັກ. 17ຕັ້ງແຕ່ໄດ້ ເປເລັກ ມາ
ເພິ່ນກໍມີອາຍຸຕໍ່ມາອີກສີ່ຮ້ອຍສາມສິບປີ ແລະມີລູກຊາຍຍິງຕື່ມອີກຫລາຍຄົນ.
18-19ເມື່ອ ເປເລັກ ມີອາຍຸໄດ້ສາມສິບປີ ເພິ່ນມີລູກຊາຍຜູ້ໜຶ່ງຊື່ ເຣອູ ຕັ້ງແຕ່ໄດ້ ເຣອູ ມາ ເພິ່ນ
ກໍມີອາຍຸຕໍ່ມາອີກສອງຮ້ອຍເກົ້າປີ ແລະມີລູກຊາຍຍິງຕື່ມອີກຫລາຍຄົນ.
20-21ເມື່ອ ເຣອູ ມີອາຍຸໄດ້ 32 ປີ ເພິ່ນມີລູກຊາຍຜູ້ໜຶ່ງຊື່ ເສຣຸກ ຕັ້ງແຕ່ໄດ້ ເສຣຸກ ມາ ເພິ່ນກໍ
ມີຊີວິດຕໍ່ມາອີກ ສອງຮ້ອຍເຈັດປີ ແລະມີລູກຊາຍຍິງຕື່ມອີກຫລາຍຄົນ.
22-23ເມື່ອ ເສຣຸກ ມີອາຍຸໄດ້ສາມສິບປີ ເພິ່ນມີລູກຊາຍຜູ້ໜຶ່ງຊື່ ນາໂຮ ຕັ້ງແຕ່ໄດ້ ນາໂຮ ມາ
ເພິ່ນກໍມີຊີວິດຕໍ່ມາອີກ ສີ່ຮ້ອຍປີ ແລະມີລູກຊາຍຍິງຕື່ມອີກຫລາຍຄົນ.
24ເມື່ອ ນາໂຮ ມີອາຍຸໄດ້ 29 ປີ ເພິ່ນມີລູກຊາຍຜູ້ໜຶ່ງຊື່ ເຕຣາ. 25ຕັ້ງແຕ່ໄດ້ ເຕຣາ ມາ ເພິ່ນກໍ
ມີຊີວິດຕໍ່ມາອີກຮ້ອຍສິບເກົ້າປີ ແລະມີລູກຊາຍຍິງຕື່ມອີກຫລາຍຄົນ.
26ເມື່ອ ເຕຣາ ມີອາຍຸໄດ້ 70 ປີ ເພິ່ນມີລູກຊາຍສາມຄົນ ແລ້ວຄື: ອັບຣາມ ນາໂຮ ແລະຮາ-
ຣານ.
27ຕໍ່ໄປນີ້ແມ່ນເຊື້ອສາຍຂອງ ເຕຣາ ຄື ເຕຣາ ມີລູກຊາຍສາມຄົນຊື່ອັບຣາມ ນາໂຮ ແລະຮາ-
ຣານ. 28ຮາຣານ ພໍ່ຂອງ ໂລດ ໄດ້ຕາຍໃນບ້ານເກີດເມືອງນອນຂອງຕົນ ຄືເມືອງ ອູເຣ ແຂວງ ຄັນ-
ເດອາ ເວລາພໍ່ຍັງມີຊີວິດຢູ່. 29ອັບຣາມ ໄດ້ແຕ່ງງານກັບນາງ ສາຣາຍ ແລະ ນາໂຮ ໄດ້ແຕ່ງງານ
ກັບນາງ ມີລະກາ ອີສະກາ ແລະ ມີລະກາ ເປັນລູກຂອງ ຮາຣານ 30ອີສະກາ ແລະ ມີລະກາ ເປັນ
ລູກຂອງ ຮາຣານ ນາງ ສາຣາຍ ບໍ່ມີລູກເພາະນາງເປັນໝັນ.

## ພຣະເຈົ້າຊົງເອີ້ນອັບຣາມ

31ເຕຣາ ພ້ອມລູກຊາຍຄື ອັບຣາມ ກັບຫລານຊາຍຄື ໂລດ ລູກຊາຍຂອງ ຮາຣານ ແລະ ສາ-
ຣາຍ ເມຍຂອງ ອັບຣາມ ໄດ້ພາກັນໜີຈາກເມືອງ ອູເຣ ປະເທດ ຄັນເດອາ ເຂົ້າໄປອາໄສຢູ່ໃນປະ-
ເທດ ການາອານ ພວກເຂົາພາກັນໄປເຖິງ ເມືອງ ຮາຣານ ແລະຕັ້ງຖິ່ນຖານຢູ່ທີ່ນັ້ນ. 32ເຕຣາ ໄດ້
ເຖິງແກ່ກຳຢູ່ທີ່ນັ້ນ ເມື່ອອາຍຸໄດ້ສອງຮ້ອຍຫ້າປີ.

# ບົດທີ 12

1ຄັນຕໍ່ມາ ພຣະຜູ້ເປັນເຈົ້າ ໄດ້ຊົງບອກແກ່ອັບຣາມວ່າ,
“ຈົ່ງອອກຈາກປະເທດຂອງເຈົ້າ
ຈາກຍາດພີ່ນ້ອງ ແລະຈາກບ້ານຂອງເຈົ້າ

ແລ້ວໄປໃນປະເທດທີ່ເຮົາຈະບອກເຈົ້າ.
2 ເຮົາຈະໃຫ້ເຈົ້າມີເຊື້ອສາຍຫລາຍຂຶ້ນ
ແລ້ວເກີດເປັນຊົນຊາດໃຫຍ່
ເຮົາຈະອວຍພອນໃຫ້ເຈົ້າ ເປັນຜູ້ທີ່ມີຊື່ສຽງ
ແລະຜູ້ອື່ນຈະໄດ້ຮັບພອນຍ້ອນເຈົ້າ.
3 ເຮົາຈະອວຍພອນຜູ້ທີ່ອວຍພອນເຈົ້າ
ແຕ່ເຮົາຈະສາບແຊ່ງຜູ້ທີ່ສາບແຊ່ງເຈົ້າ
ທຸກໆ ຊົນຊາດໃນໂລກຈະຂໍໃຫ້ເຮົາອວຍພອນພວກເຂົາ
ເໝືອນດັ່ງເຮົາໄດ້ອວຍພອນໃຫ້ພວກເຈົ້າ.”

4ເມື່ອ ອັບຣາມ ອາຍຸໄດ້ 75 ປີ ເພິ່ນອອກຈາກເມືອງ ຮາຣານ ໄປຕາມທີ່ ພຣະຜູ້ເປັນເຈົ້າ
ຊົງບອກ ໂລດ ກໍໄປນຳເພິ່ນດ້ວຍ. 5ອັບຣາມ ພາ ສາຣາຍ ເມຍຂອງຕົນກັບ ໂລດ ຫລານຊາຍ
ພ້ອມທັງຊັບສິ່ງຂອງທີ່ໄດ້ສະສົມໄວ້ໃນເມືອງ ຮາຣານ ແລະພວກຂ້ອຍໃຊ້ໄປນຳ ພວກເຂົາອອກ
ເດີນທາງມຸ້ງໜ້າໄປຍັງ ປະເທດ ການາອານ.

6ເມື່ອຮອດປະເທດ ການາອານ ແລ້ວ ອັບຣາມ ຍັງເດີນທາງຜ່ານປະເທດໄປຈົນເຖິງບ່ອນສັກ-
ສິດຂອງເມືອງ ເຊເຄັມ ຄືຕົ້ນໄມ້ສັກສິດທີ່ ໂມເຣ (ໃນເວລານັ້ນ ຊາວ ການາອານ ກໍໄດ້ອາໄສຢູ່
ໃນດິນແດນນັ້ນແລ້ວ). 7ພຣະຜູ້ເປັນເຈົ້າ ໄດ້ຊົງປະກົດຕໍ່ ອັບຣາມ ແລະກ່າວຕໍ່ເພິ່ນວ່າ, “ນີ້ແມ່ນ
ດິນແດນທີ່ເຮົາຈະມອບໃຫ້ແກ່ເຊື້ອສາຍຂອງເຈົ້າ” ສະນັ້ນ ໃນບ່ອນນີ້ ອັບຣາມ ໄດ້ສ້າງແທ່ນບູ-
ຊາຖວາຍ ພຣະຜູ້ເປັນເຈົ້າ ທີ່ໄດ້ຊົງປະກົດແກ່ຕົນ.

8ຫລັງຈາກນັ້ນ ເພິ່ນໄດ້ຍົກຍ້າຍໄປທາງທິດໃຕ້ ຄືໄປເທິງພູທາງທິດຕາເວັນອອກຂອງ ເມືອງ
ເບັດເອນ ແລະໄດ້ຕັ້ງທີ່ພັກອາໄສຢູ່ລະຫວ່າງເມືອງ ເບັດເອນ ກັບເມືອງ ອາອີ ໃນທີ່ນັ້ນ ອັບຣາມ
ໄດ້ສ້າງແທ່ນບູຊາ ແລະນະມັດສະການ ພຣະຜູ້ເປັນເຈົ້າ. 9ຕໍ່ຈາກນັ້ນ ເພິ່ນກໍຍົກຍ້າຍໄປທາງ
ທິດໃຕ້ ອອກເດີນທາງເປັນໄລຍະໆໄປສູ່ດິນແດນ ເນເກັບ.

## ອັບຣາມໃນປະເທດເນເກັບ

10ໃນ ເວລານັ້ນ ມີການອຶດຢາກຢ່າງແສນສາຫັດ ເກີດຂຶ້ນໃນປະເທດ ການາອານ ຈຶ່ງເປັນ
ເຫດໃຫ້ ອັບຣາມ ຕ້ອງໄປອາໄສຢູ່ໃນປະເທດ ເອຢິບ ໄລຍະໜຶ່ງ. 11ເມື່ອໃກ້ຈະຮອດດ່ານເຂົ້າປະ-
ເທດ ເພິ່ນຈຶ່ງເວົ້າກັບເມຍວ່າ, “ສາຣາຍ ເຈົ້າເປັນຍິງທີ່ຈົບງາມ. 12ເມື່ອຊາວ ເອຢິບ ເຫັນເຈົ້າ
ພວກເຂົາຄົງຈະເວົ້າວ່າເຈົ້າເປັນເມຍຂອງຂ້ອຍ ແລ້ວພວກເຂົາກໍຈະຂ້າຂ້ອຍຖິ້ມເພື່ອຈະເອົາເຈົ້າ
ໄປ. 13ດັ່ງນັ້ນ ເພື່ອເວັ້ນຈາກສິ່ງນີ້ ຂໍໃຫ້ເຈົ້າບອກກັບເຂົາວ່າ ເຈົ້າເປັນນ້ອງສາວຂອງຂ້ອຍ
ເພື່ອວ່າພວກເຂົາຈະບໍ່ຂ້າຂ້ອຍ ແລະຈະປະຕິບັດຕໍ່ຂ້ອຍເປັນຢ່າງດີ.”

14ເມື່ອ ອັບຣາມ ເຂົ້າໄປໃນເຂດແດນປະເທດ ເອຢິບ ແລ້ວ ຊາວ ເອຢິບ ກໍເຫັນວ່າເມຍຂອງເພິ່ນ
ເປັນຄົນງາມຫລາຍ. 15ຄັນຂ້າລາຊະການ ເອຢິບ ເຫັນ ສາຣາຍ ຈຶ່ງໄປທູນຍົກຍ້ອງນາງຕໍ່ ຟາຣາ-
ໂອ ກະສັດຂອງພວກເຂົາ ດັ່ງນັ້ນນາງຈຶ່ງຖືກພາຕົວໄປຍັງພະລາຊະວັງຂອງກະສັດ. 16ຍ້ອນ
ນາງ ສາຣາຍ ກະສັດ ຟາຣາໂອ ຈຶ່ງປະຕິບັດຕໍ່ ອັບຣາມ ເປັນຢ່າງດີແລ້ວຍັງມອບຝູງແກະ ຝູງ

ແບ້ ຝູງງົວ ຝູງລໍ ຝູງອູດ ແລະຂ້ອຍໃຊ້ຊາຍຍິງໃຫ້.
17ພຣະຜູ້ເປັນເຈົ້າ ຊົງ ເຮັດໃຫ້ກະສັດ ຟາຣາໂອ ແລະຄົນໃນພະລາຊະວັງ ເຈັບ ໄຂ້ຢ່າງຮ້າຍ
ແຮງ ກໍຍ້ອນວ່າພະອົງ ໄດ້ຮັບ ເອົານາງ ສາຣາຍ ເມຍຂອງ ອັບຣາມ ມາຢູ່ໃນພະລາຊະວັງ.
18ສະນັ້ນ ກະສັດ ຟາຣາໂອ ຈຶ່ງເອີ້ນ ອັບຣາມ ມາແລ້ວຖາມເພິ່ນວ່າ, “ເປັນຫຍັງເຈົ້າຈຶ່ງເຮັດດັ່ງນີ້?
ເປັນຫຍັງຈຶ່ງບໍ່ບອກວ່ານາງເປັນເມຍຂອງເຈົ້າ? 19ເປັນຫຍັງຈຶ່ງເວົ້າວ່າເປັນນ້ອງສາວ? ຍ້ອນ
ຈັ່ງຊັ້ນແຫລະ ເຮົາຈຶ່ງເອົາລາວມາເປັນເມຍ ນີ້ລາວຢູ່ນີ້ ໃຫ້ເອົາລາວຄືນໄປສາ.” 20ຄັນແລ້ວ
ກະສັດ ຟາຣາໂອ ໄດ້ສັ່ງໃຫ້ຂ້າລາຊະການຂອງພະອົງ ພາອັບຣາມ ເອົາເມຍ ແລະສິ່ງຂອງອອກ
ຈາກປະເທດໄປ.

# ບົດທີ 13

## ອັບຣາມແລະໂລດແຍກຈາກກັນ

1ອັບຣາມ ພາເມຍກັບສິ່ງຂອງທີ່ເພິ່ນມີ ມຸ້ງໜ້າອອກຈາກປະເທດ ເອຢິບ ໄປສູ່ເຂດ ເນເກັບ
ໂລດ ກໍຕິດຕາມເພິ່ນໄປດ້ວຍ. 2ອັບຣາມ ເປັນຄົນຮັ່ງມີ ເພິ່ນມີຝູງແກະ ຝູງແບ້ ແລະຝູງງົວ
ຄວາຍ ພ້ອມທັງເງິນຄຳຢ່າງຫລວງຫລາຍ.
3ເພິ່ນຍົກຍ້າຍຈາກເຂດ ເນເກັບ ໄປສູ່ເມືອງ ເບັດເອນ ເປັນໄລຍະໆ ຈົນເຖິງບ່ອນຊຶ່ງເພິ່ນໄດ້
ຕັ້ງທີ່ພັກມາແຕ່ກ່ອນ ຢູ່ລະຫວ່າງ ເມືອງ ເບັດເອນ ກັບ ເມືອງ ອາອີ. 4ເພິ່ນໄດ້ກັບຄືນໄປບ່ອນທີ່
ເພິ່ນໄດ້ສ້າງແທ່ນບູຊາໄວ້ແຕ່ກ່ອນແລ້ວ ແລະໄດ້ນະມັດສະການ ພຣະຜູ້ເປັນເຈົ້າຢູ່ທີ່ນັ້ນ.
5ໂລດ ຜູ້ເດີນທາງຮ່ວມໄປກັບ ອັບຣາມ ກໍມີ ຝູງແກະ ຝູງແບ້ ຝູງງົວ ຄວາຍ ແລະຜ້າເຕັນ
ຈຳນວນຫລາຍ. 6-7ເມື່ອເປັນເຊັ່ນນີ້ ຄົນລ້ຽງສັດຂອງ ອັບຣາມ ແລະ ໂລດ ຈຶ່ງຜິດຖຽງກັນ ເພາະ
ບໍ່ມີທົ່ງຫຍ້າລ້ຽງສັດພຽງພໍ ເພື່ອໃຫ້ເຂົາທັງສອງຝ່າຍຢູ່ຮ່ວມກັນໄດ້ ໃນຄາວນັ້ນຊາວ ການາອານ
ແລະຊາວ ເປຣິຊີ ກໍໄດ້ອາໄສຢູ່ທີ່ນັ້ນແລ້ວ.
8ດັ່ງນັ້ນ ອັບຣາມ ຈຶ່ງເວົ້າກັບ ໂລດ ວ່າ, “ເຮົາທັງສອງກໍເປັນພີ່ນ້ອງກັນ ຂໍຢ່າໃຫ້ຄົນຂອງເຈົ້າ
ແລະຄົນຂອງຂ້ອຍຜິດຖຽງກັນເລີຍ. 9ເຮົາແຍກຈາກກັນເສຍ ຈົ່ງເລືອກເອົາດິນທີ່ເຈົ້າເຫັນຢູ່ຕໍ່-
ໜ້ານີ້ຕາມເຈົ້າຕ້ອງການ ແລ້ວໜີຈາກຂ້ອຍໄປ ຖ້າເຈົ້າໄປທາງໜຶ່ງ ຂ້ອຍກໍຈະໄປອີກທາງໜຶ່ງ.”
10ດັ່ງນັ້ນ ໂລດ ຈຶ່ງຫລຽວເບິ່ງທົ່ວໆໄປເຫັນວ່າ ທົ່ງຮາບພຽງຂອງແມ່ນ້ຳຢໍແດນທັງໝົດ ຈົນ
ເຖິງ ເມືອງ ໂຊອາ ມີນ້ຳຫລາຍເໝືອນດັ່ງສວນຂອງ ພຣະເຈົ້າ ຫລື ເໝືອນດິນປະເທດ ເອຢິບ
(ກ່ອນ ພຣະເຈົ້າ ຊົງທຳລາຍ ເມືອງ ໂຊໂດມ ແລະ ເມືອງ ໂກໂມຣາ ທົ່ງຮາບພຽງນີ້ແມ່ນອຸດົມສົມບູນ
ດີ). 11ໂລດ ຈຶ່ງຕັດສິນໃຈເລືອກເອົາທົ່ງຮາບພຽງຂອງແມ່ນ້ຳຢໍແດນ ທັງໝົດເປັນບ່ອນຢູ່ຂອງຕົນ
ແລ້ວເຄື່ອນຂະບວນມຸ້ງໜ້າໄປທາງທິດຕາເວັນອອກ ການແຍກກັນຂອງພວກເຂົາທັງສອງເປັນ
ດັ່ງນີ້ແຫລະ. 12ອັບຣາມ ໄດ້ອາໄສຢູ່ໃນປະເທດ ການາອານ ສ່ວນ ໂລດ ໄດ້ຕັ້ງຖິ່ນຖານຢູ່ໃນລະ-
ຫວ່າງກາງຂອງເມືອງຕ່າງໆ ໃນທົ່ງຮາບພຽງຄື ຕັ້ງຄ້າຍພັກໃກ້ກັບເມືອງ ໂຊໂດມ. 13ປະຊາຊົນ
ໃນເມືອງນີ້ເປັນຄົນຊົ່ວຮ້າຍ ແລະເຮັດບາບຕໍ່ສູ້ ພຣະຜູ້ເປັນເຈົ້າ.

## ອັບຣາມຍ້າຍໄປເມືອງເຮັບໂຣນ

[14]ຫລັງຈາກ ໂລດ ໄດ້ໜີໄປແລ້ວ ພຣະຜູ້ເປັນເຈົ້າ ຊົງກ່າວກັບ ອັບຣາມ ວ່າ, “ຕັ້ງແຕ່ບ່ອນເຈົ້າ
ຢືນຢູ່ນີ້ ຈົ່ງເບິ່ງໄປທົ່ວທຸກທິດໃຫ້ດີ. [15]ດິນທຸກໆ ບ່ອນທີ່ເຈົ້າແນມເຫັນຢູ່ນີ້ ເຮົາຈະໃຫ້ເຈົ້າ
ແລະ ເຊື້ອສາຍ ຂອງ ເຈົ້າຢູ່ສືບໆ ໄປ ເປັນນິດ. [16]ເຮົາຈະ ເຮັດ ໃຫ້ ເຊື້ອສາຍ ຂອງ ເຈົ້າ ເພີ່ມທະວີ
ຫລາຍຂຶ້ນດັ່ງຝຸ່ນດິນ ຖ້າຜູ້ໃດນັບຂີ້ຝຸ່ນດິນໃນໂລກນີ້ໄດ້ ຈຶ່ງຈະສາມາດນັບເຊື້ອສາຍຂອງເຈົ້າ
ໄດ້. [17]“ບັດນີ້ ຈົ່ງລຸກຂຶ້ນ ແລ້ວອອກເດີນທາງໄປທົ່ວດິນແດນນີ້ ເພາະວ່າເຮົາຈະໃຫ້ດິນຕອນນີ້
ແກ່ເຈົ້າ.”
[18]ດັ່ງນັ້ນ ອັບຣາມ ຈຶ່ງຍົກຍ້າຍຂະບວນໄປຕັ້ງຢູ່ໃກ້ໆ ກັບຕົ້ນໄມ້ສັກສິດຂອງ ມາມເຣ ທີ່
ເມືອງ ເຮັບໂຣນ ໃນທີ່ນັ້ນເພິ່ນໄດ້ສ້າງແທ່ນບູຊາຖວາຍແກ່ພຣະຜູ້ເປັນເຈົ້າ.

# ບົດທີ 14

## ອັບຣາມຊ່ອຍຊີວິດໂລດ

[1]ອຳຣາເຟັນ ກະສັດ ເມືອງ ຊີນາ ອາຣີໂອກ ກະສັດ ເມືອງ ເອັນລາສາ, ເຄໂດ-ລາໂອເມີ ກະ-
ສັດຂອງ ເມືອງ ເອລາມ ແລະ ຕີດານ ກະສັດພວກ ໂກຍີມ ໄດ້ເຮັດເສິກກັບກະສັດຫ້າອົງຄື ເບຣາ
ກະສັດ ເມືອງ ໂຊໂດມ [2]ບີຊາ ກະສັດ ເມືອງ ໂກໂມຣາ ຊີນາບ ກະສັດ ເມືອງ ອັດມາ ເຊເມເບ ກະ-
ສັດ ເມືອງ ເຊໂບຍີມ ແລະກະສັດ ເມືອງ ເບລາ (ຫລື ໂຊອາ). [3]ກະສັດທັງຫ້າອົງນີ້ໄດ້ຮ່ວມເຂົ້າກັນ
ເປັນພັນທະມິດ ແລະ ໄດ້ໂຮມກຳລັງກັນຢູ່ໃນທົ່ງຮາບພຽງ ສິດດີມ ຊຶ່ງໃນປັດຈຸບັນນີ້ເປັນທະເລ
ຕາຍ. [4]ກະສັດທັງຫ້າໄດ້ຝ່າຍແພ້ຍອມຢູ່ໃຕ້ການຄວບຄຸມຂອງກະສັດ ເຄໂດ-ລາໂອເມີ ເປັນເວ-
ລາສິບສອງປີ ແຕ່ວ່າໃນປີທີສິບສາມ ພວກກະສັດທັງຫ້າອົງນັ້ນໄດ້ພາກັນກະບົດຂຶ້ນ. [5]ໃນປີທີ
ສິບສີ່ ເຄໂດ-ລາໂອເມີພ້ອມທັງພັນທະມິດໄດ້ຍົກທັບມາປາບພວກ ເຣຟາຍີມ ໃນເມືອງ ອັດຊະເຕ-
ໂຣດ-ການາຍີມ ແລະພວກຊູຊີມ ໃນເມືອງຮາມ ພວກ ເອມີມ ໃນທົ່ງນາຂອງເມືອງ ກີຣິອາດທາ-
ຢີມ ແລະພວກ ໂຮຣີ ໃນພູເຂົາ ເສອີ [6]ພະອົງຍັງໄລ່ຕິດຕາມພວກເຂົາຈົນຮອດ ເມືອງ ເອນປາຣານ
ຊຶ່ງຢູ່ໃກ້ຖິ່ນກັນດານ. [7]ຕໍ່ຈາກນັ້ນ ພວກກະສັດເຫລົ່ານີ້ໄດ້ເຄື່ອນທັບກັບມາເຖິງ ເມືອງ ກາເດັດ
(ເມືອງນີ້ມີຊື່ອີກວ່າ ນໍ້າພຸບ່ອນຕັດສິນຄວາມ) ແລະໄດ້ຕີຊະນະທຸກໆ ເມືອງຂອງຊາວ ອາມາ-
ເລັກ ພ້ອມທັງຊາວ ອະໂມຣິດ ຊຶ່ງໄດ້ອາໄສຢູ່ໃນເມືອງ ຮາຊາໂຊນ-ຕາມາ.
[8]ຕໍ່ມາພວກກະສັດ ເມືອງ ໂຊໂດມ ໂກໂມຣາ ອັດມາ ເຊໂບຍີມ ແລະ ເບລາ ໄດ້ທ້ອນໂຮມ
ກຳລັງກອງທັບຢູ່ໃນທົ່ງຮາບພຽງ ສິດດີມ. [9]ເພື່ອຕໍ່ສູ້ ເຄໂດ-ລາໂອເມີ ກະສັດ ເມືອງ ເອລາມ ຕີ-
ດານ ກະສັດ ເມືອງ ໂກຍີມ ອຳຣາເຟັນ ກະສັດ ເມືອງ ຊີນາ ແລະ ອາຣີໂອກ ກະສັດ ເມືອງ ເອັນ-
ລາສາ ຝ່າຍໜຶ່ງມີກະສັດຫ້າອົງ ສູ້ກັບອີກຝ່າຍໜຶ່ງມີກະສັດສີ່ອົງ. [10]ທົ່ງຮາບພຽງຂອງ ສິດດີມ
ເຕັມໄປດ້ວຍບໍ່ຢາງປູທາງ ເມື່ອກະສັດ ເມືອງ ໂຊໂດມ ແລະ ໂກໂມຣາ ພະຍາຍາມເອົາຕົວລອດ
ຈາກການສູ້ຮົບ ທັງສອງພະອົງຈຶ່ງຕົກລົງໃນບໍ່ນັ້ນ ສ່ວນກະສັດອົງອື່ນໄດ້ຫລົບລີ້ເອົາຕົວລອດ
ໄປທາງພູເຂົາ. [11]ພວກກະສັດທັງສີ່ອົງໄດ້ຍຶດ ເອົາສິ່ງຂອງທັງໝົດ ແລະ ເຂົ້າປາອາຫານໃນ
ເມືອງ ໂຊໂດມ ແລະ ເມືອງ ໂກໂມຣາ ແລ້ວໜີໄປ. [12]ແລ້ວຍັງໄດ້ຈັບ ໂລດ ພ້ອມທັງຍຶດເອົາຊັບສິນ

ເງິນທອງຂອງເພິ່ນໄປນຳ ເພາະໃນຂະນະນັ້ນເພິ່ນໄດ້ອາໄສຢູ່ເມືອງ ໂຊໂດມ.
[13]ມີຊາຍຄົນໜຶ່ງປົບມາຈາກສະໜາມຮົບ ບອກເລື່ອງທີ່ເກີດຂຶ້ນກັບ ໂລດ ໃຫ້ ອັບຣາມ ຮູ້ຈັກ
ອັບຣາມ ເປັນຄົນ ເຮັບເຣີ ຊຶ່ງໄດ້ອາໄສຢູ່ໃກ້ຕົ້ນໄມ້ສັກສິດຂອງ ມາມເຣ ຊາວ ອະໂມຣິດ ຜູ້ຊຶ່ງ
ເປັນອ້າຍຊອງ ເອັດຊະໂຄນ ແລະ ອາເນ ຄົນເຫລົ່ານີ້ເປັນພັນທະມິດຂອງ ອັບຣາມ. [14]ເມື່ອ ອັບ-
ຣາມ ໄດ້ຍິນວ່າຫລານຂອງ ເພິ່ນຖືກຈັບໄປ ເພິ່ນຈຶ່ງນຳກຳລັງພົນທີ່ຈົ່ງຮັກພັກດີຕໍ່ເພິ່ນຈຳນວນ
318 ຄົນ ໄລ່ຕິດຕາມກະສັດທັງສີ່ອົງໄປເຖິງ ເມືອງ ດານ. [15]ໃນທີ່ນັ້ນ ອັບຣາມ ໄດ້ແຍກກຳລັງ
ອອກເປັນສອງສາຍ ແລ້ວບຸກໂຈມຕີພວກກະສັດທັງສີ່ໃນເວລາກາງຄືນ ຈົນກະສັດທັງສີ່ພ່າຍ
ແພ້ໄປ ພວກ ອັບຣາມ ໄດ້ໄລ່ຕິດຕາມພວກເຂົາໄປຈົນ ເຖິງ ເມືອງ ໂຮບາ ທາງທິດເໜືອຂອງ
ເມືອງ ດາມາເຊ. [16]ອັບຣາມ ໄດ້ຍຶດຊັບສິນເງິນທອງທັງໝົດກັບຄືນມາ ທັງໄດ້ນຳ ໂລດ ຫລານ
ຊາຍຂອງເພິ່ນ ແລະຊັບສົມບັດຂອງລາວ ພ້ອມທັງພວກຜູ້ຍິງ ແລະຄົນອື່ນໆ ກັບຄືນມາດ້ວຍ.

## ກະສັດເມນຄີເຊເດັກໃຫ້ພອນແກ່ອັບຣາມ

[17]ເມື່ອອັບຣາມກັບຄືນມາແຕ່ຮົບ ແລະໄດ້ໄຊຊະນະກະສັດ ເຄໂດ-ລາໂອເມີ ແລະກະສັດ
ອື່ນໆ ທີ່ເປັນພັນທະມິດຂອງພະອົງ ແລ້ວກະສັດ ເມືອງ ໂຊໂດມ ໄດ້ສະເດັດອອກມາພົບ ເພິ່ນທີ່
ຮ່ອມພູຊາເວ (ຫລືມີຊື່ອີກວ່າ ຮ່ອມພູຂອງກະສັດ). [18]ແລ້ວ ເມັນຄີເຊເດັກ ຜູ້ເປັນກະສັດເມືອງ
ຊາເລັມ ແລະເປັນປະໂລຫິດຂອງ ພຣະເຈົ້າ ອົງສູງສຸດ ໄດ້ເອົາເຂົ້າຈີ່ ແລະເຫລົ້າອະງຸ່ນ ໃຫ້ແກ່
ອັບຣາມ. [19]ພ້ອມທັງອວຍໄຊໃຫ້ພອນແກ່ເພິ່ນວ່າ:

“ຂໍ ພຣະເຈົ້າ ອົງສູງສຸດ
ຜູ້ຊົງສ້າງສະຫວັນ ແລະແຜ່ນດິນໂລກ
ໂຜດປະທານພອນແກ່ອັບຣາມ ເທີ້ນ.
[20] ສາທຸການແດ່ ພຣະເຈົ້າ ອົງສູງສຸດ
ຜູ້ຊົງ ໃຫ້ທ່ານຜາບ ແພ້ສັດຕູ”

ແລ້ວ ອັບຣາມ ກໍຖວາຍໜຶ່ງສ່ວນສິບຂອງສິ່ງຂອງທີ່ເພິ່ນໄດ້ມາຈາກການສູ້ຮົບໃຫ້ກະສັດ ເມັນ-
ຄີເຊເດັກ.
[21]ຄັນ ແລ້ວກະສັດ ເມືອງ ໂຊໂດມ ກ່າວແກ່ ອັບຣາມ ວ່າ, “ຂໍຈົ່ງຄືນຄົນທັງໝົດນີ້ໃຫ້ແກ່ເຮົາ
ສ່ວນເຄື່ອງຂອງນັ້ນທ່ານຈົ່ງ ເອົາໄປສາ.” [22]ແຕ່ ອັບຣາມ ທູນຕອບວ່າ, “ຂ້ານ້ອຍໄດ້ສາບານຢ່າງ
ເຄັ່ງຄັດຕໍ່ພຣະພັກ ພຣະຜູ້ເປັນເຈົ້າ ອົງສູງສຸດຜູ້ສ້າງສະຫວັນ ແລະ ແຜ່ນດິນ ໂລກ ແລ້ວວ່າຂ້າ-
ນ້ອຍຈະບໍ່ເອົາສິ່ງໜຶ່ງສິ່ງໃດທີ່ເປັນຂອງພະອົງ. [23]ແມ່ນແຕ່ຝ້າຍໄໝຫຍິບ ຫລືສາຍຮັດເກີບເສັ້ນ
ໜຶ່ງ ເພື່ອພະອົງຈະບໍ່ໄດ້ກ່າວວ່າ ແມ່ນເຮົາທີ່ເຮັດໃຫ້ ອັບຣາມ ເປັນຄົນຮັ່ງມີ. [24]ຂ້ານ້ອຍຈະບໍ່ຮັບ
ສິ່ງໜຶ່ງສິ່ງໃດເລີຍເວັ້ນໄວ້ແຕ່ສະບຽງອາຫານທີ່ຄົນຂອງຂ້ານ້ອຍໄດ້ກິນໄປແລ້ວ ແລະສ່ວນແບ່ງ
ຂອງພວກທີ່ເປັນພັນທະມິດຂອງຂ້ານ້ອຍຄື ອາເນ ເອັດຊະໂຄນ ແລະ ມາມເຣ ໃຫ້ເຂົາເຈົ້າຮັບ
ເອົາສ່ວນຂອງພວກເຂົາໄປສາ.

# ບົດທີ 15

## ພຣະເຈົ້າຊົງສັນຍາກັບອັບຣາມ

1ຫລັງຈາກນັ້ນ ອັບຣາມໄດ້ຍິນພຣະສຸຣະສຽງຂອງພຣະເຈົ້າໃນນິມິດວ່າ,
"ອັບຣາມເອີຍ ຢ່າສູ່ຢ້ານ
ເຮົາເປັນແຜ່ນເຫລັກຕ້ານທານເພື່ອປົກປັກຮັກສາເຈົ້າ
ເຮົາຈະປະທານບຳເໜັດອັນຍິ່ງໃຫຍ່ໃຫ້ແກ່ເຈົ້າ."
2ອັບຣາມກາບທູນວ່າ, "ຂ້າແດ່ພຣະຜູ້ເປັນເຈົ້າຂອງຂ້ານ້ອຍ ພຣະອົງຢາກປະທານບຳເໜັດ
ໃຫ້ແກ່ຂ້ານ້ອຍເຮັດຫຍັງ? ເພາະຂ້ານ້ອຍບໍ່ມີລູກຜູ້ຈະສືບມໍລະດົກຈາກຂ້ານ້ອຍ ມີແຕ່ຜູ້ດຽວກໍຄື
ເອລີເອເຊ ຊາວດາມາເຊ. 3ພຣະອົງບໍ່ໄດ້ຊົງປະທານລູກໃຫ້ຂ້ານ້ອຍ ແລະຜູ້ໜຶ່ງໃນຈຳນວນຂ້າ
ໃຊ້ກໍຈະເປັນຜູ້ໄດ້ຮັບມໍລະດົກຂອງຂ້ານ້ອຍ."
4ຄັນຕໍ່ມາ ອັບຣາມໄດ້ຍິນພຣະຜູ້ເປັນເຈົ້າກ່າວແກ່ເພິ່ນອີກວ່າ, "ຂ້າໃຊ້ຜູ້ນີ້ຈະບໍ່ສືບມໍລະດົກ
ຂອງເຈົ້າດອກ ແມ່ນລູກຊາຍຂອງເຈົ້າຈະເປັນຜູ້ໄດ້ຮັບ." 5ພຣະຜູ້ເປັນເຈົ້າໄດ້ພາເພິ່ນຍ່າງອອກ
ໄປທາງນອກ ແລະເວົ້າວ່າ, "ຈົ່ງນັບດວງດາວຢູ່ທ້ອງຟ້າທີ່ເຈົ້າເຫັນຢູ່ນັ້ນເບິ່ງດູ ນັບໄດ້ບໍ? ເຈົ້າ
ຈະມີເຊື້ອສາຍຫລາຍຄືກັນກັບດວງດາວເຫລົ່ານັ້ນ."
6ອັບຣາມກໍເຊື່ອຟັງພຣະຜູ້ເປັນເຈົ້າ ຍ້ອນຄວາມເຊື່ອນັ້ນ ພຣະອົງຈຶ່ງຊົງຖືວ່າ ເພິ່ນເປັນຜູ້
ຊອບທຳ.
7ຄັນຕໍ່ມາ ພຣະຜູ້ເປັນເຈົ້າຊົງກ່າວແກ່ອັບຣາມວ່າ, "ເຮົາແມ່ນພຣະຜູ້ເປັນເຈົ້າ ຜູ້ນຳເຈົ້າໜີ
ອອກຈາກເມືອງອູເຣ ປະເທດຄັນເດອາ ເພື່ອຈະໃຫ້ປະເທດນີ້ເປັນຂອງເຈົ້າ." 8ແຕ່ອັບຣາມ
ທູນຕອບວ່າ, "ຂ້າແດ່ພຣະຜູ້ເປັນເຈົ້າຂອງຂ້ານ້ອຍ ຂ້ານ້ອຍຈະຮູ້ວ່າປະເທດນີ້ເປັນສ່ວນຂອງ
ຂ້ານ້ອຍໄດ້ດ້ວຍວິທີໃດ?"
9ພຣະອົງຊົງຕອບວ່າ, "ຈົ່ງເອົາງົວແມ່ອາຍຸສາມປີໂຕໜຶ່ງ ແບ້ແມ່ອາຍຸສາມປີໂຕໜຶ່ງ ແກະ
ເຖິກອາຍຸສາມປີໂຕໜຶ່ງ ນົກເຂົາໂຕໜຶ່ງ ນົກກາງແກໂຕໜຶ່ງມາຖວາຍແກ່ເຮົາ." 10ອັບຣາມໄດ້
ເອົາສັດ ແລະນົກເຫລົ່ານັ້ນມາຖວາຍແກ່ພຣະເຈົ້າ ສັດນັ້ນເພິ່ນຜ່າເຄິ່ງແລ້ວລຽນເປັນແຖວຊື່ກັນ
ສ່ວນນົກນັ້ນເພິ່ນບໍ່ໄດ້ຜ່າເຄິ່ງ. 11ຄັນແຮ້ງບິນມາຈັບເນື້ອສັດ ເພິ່ນກໍໄລ່ມັນໜີ.
12ເມື່ອຕາເວັນຄ້ອຍລັບລົງແລ້ວ ອັບຣາມກໍນອນຫລັບຢ່າງສະໜິດ ເວລານັ້ນຄວາມຢ້ານກົວ
ອັນໃຫຍ່ກໍບັງເກີດຂຶ້ນກັບເພິ່ນ.
13ພຣະຜູ້ເປັນເຈົ້າຊົງກ່າວແກ່ເພິ່ນວ່າ, "ເຊື້ອສາຍຂອງເຈົ້າຈະໄປອາໄສຢູ່ຕ່າງປະເທດໃນ
ຖານະຄົນຕ່າງຖິ່ນ ພວກເຂົາຈະຕົກເປັນທາດຂອງປະເທດນັ້ນ ແລະຈະຖືກກົດຂີ່ຂົ່ມເຫັງເປັນ
ເວລາສີ່ຮ້ອຍປີ. 14ແຕ່ເຮົາຈະລົງໂທດປະເທດທີ່ປະພຶດເຊັ່ນນັ້ນຕໍ່ພວກເຂົາ ແລະພວກເຂົາຈະ
ອອກມາຈາກປະເທດນັ້ນ ໂດຍມີຊັບສົມບັດຢ່າງມະຫາສານ. 15ແຕ່ເຈົ້າຈະມີຊີວິດອັນຜາສຸກ
ແລະຕາຍຢ່າງສະຫງົບສຸກ ເຈົ້າຈະຕາຍເວລາເຖົ້າແກ່ຫລາຍ ແລ້ວເຂົາຈະຝັງສົບເຈົ້າໄວ້. 16ໃນ
ຊົ່ວອາຍຸສີ່ເຊັ່ນຄົນ ເຊື້ອສາຍຂອງເຈົ້າຈະກັບຄືນມາທີ່ນີ້ ແລ້ວເຮົາຈະຂັບໄລ່ຊາວອະໂມຣິດ
ເພາະໃນເວລານັ້ນພວກເຂົາຈະໄດ້ກະທຳຄວາມຊົ່ວຢ່າງເຕັມປ່ຽມແລ້ວ.

17ເມື່ອຕາເວັນຕົກແລ້ວ ໃນທັນທີທັນໃດກໍມີເຕົາໄຟຮ້ອນຄວັນພຸ່ງຂຶ້ນ ແລະໂຄມໄຟທີ່ມີແສງ
ຮຸ່ງເຮືອງປະກົດຂຶ້ນ ແລ້ວກາຍໄປລະຫວ່າງຊາກສັດເຫລົ່ານັ້ນ. 18-21ໃນວັນນັ້ນ ພຣະຜູ້ເປັນ-
ເຈົ້າ ຊົງໃຫ້ຄຳໝັ້ນສັນຍາກັບ ອັບຣາມ ວ່າ, “ເຮົາຂໍມອບດິນແດນນີ້ໃຫ້ແກ່ເຊື້ອສາຍຂອງເຈົ້າ
ຕັ້ງແຕ່ແມ່ນ້ຳເຂດແດນປະເທດ ເອຢິບ ຈົນເຖິງແມ່ນ້ຳໃຫຍ່ ເອຟຣາດ ຄືດິນແດນຂອງພວກ ເກ-
ນີ ພວກ ເກນິດຊີ ພວກ ກາດໂມນ ພວກຮິດຕີ ພວກ ເປຣິຊີ ພວກ ເຣຟາອິມ ພວກອະໂມຣິດ
ພວກ ການາອານ ພວກ ກີກາຊີ ແລະພວກ ເຢບຸດ ດ້ວຍ.”

# ບົດທີ 16

## ຮາກາແລະອິດຊະມາເອນ

1ນາງ ສາຣາຍ ເມຍ ອັບຣາມ ບໍ່ເຄີຍມີລູກ ແຕ່ນາງມີສາວໃຊ້ ເອຢິບ ຜູ້ໜຶ່ງຊື່ ຮາກາ. 2ສາຣາຍ
ຈຶ່ງເວົ້າຕໍ່ ອັບຣາມ ວ່າ, “ເບິ່ງດູ ຈົນເຖິງດຽວນີ້ພຣະຜູ້ເປັນເຈົ້າບໍ່ໄດ້ໃຫ້ຂ້ອຍມີລູກ ເປັນຫຍັງເຈົ້າ
ຈຶ່ງບໍ່ສົມສູ່ຮ່ວມກັບສາວໃຊ້ຂອງຂ້ອຍ? ບາງທີນາງຈະມີລູກໃຫ້ຂ້ອຍກໍໄດ້.”

3ດັ່ງນັ້ນ ອັບຣາມ ກໍເຮັດຕາມ ສາຣາຍ ຈຶ່ງມອບນາງ ຮາກາ ສາວໃຊ້ຊາວ ເອຢິບ ໃຫ້ເປັນເມຍ
ນ້ອຍຂອງຜົວຕົນ ເຫດການນີ້ມີຂຶ້ນຫລັງຈາກ ອັບຣາມ ອາໄສຢູ່ໃນປະເທດ ການາອານ ເປັນເວ-
ລາສິບປີແລ້ວ. 4ຄັນ ອັບຣາມ ໄດ້ຢູ່ຮ່ວມກັບນາງ ຮາກາ ແລ້ວ ນາງກໍເລີຍຖືພາ ເມື່ອນາງ ຮາກາ
ຮູ້ວ່ານາງຖືພາຈຶ່ງເກີດມີຄວາມຈອງຫອງ ແລະ ໝິ່ນປະໝາດນາງ ສາຣາຍ. 5ຄັນແລ້ວ ສາຣາຍ
ຈຶ່ງເວົ້າກັບ ອັບຣາມ ວ່າ, “ມັນເປັນຄວາມຜິດຂອງເຈົ້າທີ່ນາງ ຮາກາ ໝິ່ນປະໝາດຂ້ອຍ ຂ້ອຍໄດ້
ເອົາສາວໃຊ້ຂອງຂ້ອຍໃຫ້ເປັນເມຍເຈົ້າ ແຕ່ເມື່ອມັນຮູ້ວ່າມັນຖືພາແລ້ວກໍໝິ່ນປະໝາດຂ້ອຍ ຂໍ
ພຣະຜູ້ເປັນເຈົ້າຕັດສິນເອງສາວ່າໃນລະຫວ່າງຂ້ອຍກັບເຈົ້າແມ່ນຜູ້ໃດຖືກ ແລະແມ່ນຜູ້ໃດຜິດ.”

6ອັບຣາມ ຈຶ່ງຕອບເມຍວ່າ, “ດີແລ້ວ ຈົ່ງເຂົ້າໃຈວ່ານາງ ຮາກາ ຍັງເປັນສາວໃຊ້ຂອງເຈົ້າຢູ່
ແລະຍັງຢູ່ໃຕ້ການຄຸ້ມຄອງຂອງເຈົ້າ ຈົ່ງປະຕິບັດກັບນາງຕາມທີ່ເຈົ້າເຫັນສົມຄວນສາ” ດັ່ງນັ້ນ
ນາງ ສາຣາຍ ຈຶ່ງຂົ່ມເຫັງນາງ ຮາກາ ຈົນນາງໄດ້ປົບໜີໄປ.

7ທູດຂອງ ພຣະຜູ້ເປັນເຈົ້າພົບນາງໃກ້ ກັບບໍ່ນ້ຳໃນຖິ່ນກັນດານທາງໄປເມືອງ ຊູເຣ ຈຶ່ງຖາມ
ນາງວ່າ, 8“ສາວໃຊ້ນາງ ສາຣາຍ ເຈົ້າມາແຕ່ໃສ? ແລະເຈົ້າຈະໄປໃສ?” ນາງຕອບວ່າ, “ຂ້າ-
ນ້ອຍກຳລັງປົບໜີຈາກນາງ ສາຣາຍ.”

9ທູດ ພຣະຜູ້ເປັນເຈົ້າ ຈຶ່ງກ່າວວ່າ, “ຈົ່ງກັບຄືນເມືອຫານາຍຍິງຂອງເຈົ້າ ແລະຍອມຖ່ອມຕົວ
ລົງຢູ່ໃຕ້ການຄຸ້ມຄອງຂອງນາງສາ.” 10ທູດອົງນັ້ນເວົ້າຕໍ່ໄປອີກວ່າ:

“ເຮົາຈະໃຫ້ເຊື້ອສາຍຂອງເຈົ້າທະວີຫລາຍຂຶ້ນ
ຈົນບໍ່ມີໃຜສາມາດນັບໄດ້.
11 ເຈົ້າກຳລັງຈະມີລູກຊາຍ ຊຶ່ງເຈົ້າຈະໃສ່ຊື່ວ່າອິດຊະມາເອນ
ເພາະວ່າ ພຣະຜູ້ເປັນເຈົ້າ ຊົງໄດ້ຍິນຄຳຮ້ອງທຸກຂອງເຈົ້າ.
12 ແຕ່ລູກຊາຍເຈົ້າຈະເປັນເໝືອນລໍປ່າ
ລາວຈະຕໍ່ສູ້ກັບທຸກໆ ຄົນ

และທຸກໆ ຄົນກໍຈະຕໍ່ສູ້ລາວ
ລາວຈະຢູ່ໂດຍປາສະຈາກຍາດພີ່ນ້ອງ."

13ນາງ ຮາກາ ຖາມຕົນເອງວ່າ, "ຂ້ອຍໄດ້ເຫັນຜູ້ທີ່ເຫັນຂ້ອຍກ່ອນແມ່ນບໍ?" ດັ່ງນັ້ນ ນາງຈຶ່ງ
ອອກພຣະນາມຂອງ ພຣະຜູ້ເປັນເຈົ້າ ວ່າ, "ພຣະອົງ ເປັນ ພຣະເຈົ້າ ຜູ້ຊົງ ເຫັນ." 14ດ້ວຍ ເຫດນີ້
ນໍ້າສ້າງຊຶ່ງຢູ່ລະຫວ່າງ ເມືອງ ກາເດັດ ແລະ ເມືອງ ເບເຣັດ ຈຶ່ງມີຊື່ວ່າ, "ນໍ້າສ້າງຂອງ ພຣະເຈົ້າ ຜູ້
ຊົງ ເຫັນ."

15ນາງ ຮາກາ ໄດ້ລູກຊາຍໃຫ້ແກ່ ອັບຣາມ ແລ້ວເພິ່ນໄດ້ຕັ້ງຊື່ເດັກນັ້ນວ່າ ອິດຊະມາເອນ.
16ໃນເວລານັ້ນ ອັບຣາມ ມີອາຍຸໄດ້ແປດສິບຫົກປີ.

# ບົດທີ 17

## ພິທີຕັດເປັນເຄື່ອງໝາຍແຫ່ງໜັ້ນຄຳສັນຍາ

1ເມື່ອ ອັບຣາມ ອາຍຸໄດ້ເກົ້າສິບເກົ້າປີ ພຣະຜູ້ເປັນເຈົ້າ ຊົງປະກົດໃຫ້ເພິ່ນເຫັນ ແລະກ່າວວ່າ,
"ເຮົາແມ່ນ ພຣະເຈົ້າ ຜູ້ມີອຳນາດໃຫຍ່ ຈົ່ງເຊື່ອຟັງເຮົາແລະປະພຶດແຕ່ຄວາມຊອບທຳຕະຫລອດ
ຊີວິດຂອງເຈົ້າ. 2ເຮົາຈະເຮັດຄຳໝັ້ນສັນຍາກັບເຈົ້າ ແລະຈະໃຫ້ເຊື້ອສາຍຂອງເຈົ້າເພີ່ມທະວີ
ຂຶ້ນ."

3ອັບຣາມ ກົ້ມຂາບລົງ ແລ້ວ ພຣະເຈົ້າ ຊົງກ່າວວ່າ, 4"ນີ້ແມ່ນຄຳໝັ້ນສັນຍາທີ່ເຮົາເຮັດກັບເຈົ້າ
ເຮົາສັນຍາວ່າເຈົ້າຈະ ເປັນບັນພະບູລຸດຂອງປະເທດທັງຫລາຍ. 5ເຈົ້າຈະບໍ່ຊື່ ອັບຣາມ ອີກຕໍ່ໄປ
ແຕ່ເຈົ້າຈະມີຊື່ໃໝ່ວ່າ ອັບຣາຮາມ ເພາະວ່າເຮົາກຳລັງໃຫ້ເຈົ້າເປັນບັນພະບູລຸດຂອງປະເທດ
ທັງຫລາຍ. 6ເຮົາຈະໃຫ້ເຊື້ອສາຍຂອງເຈົ້າເພີ່ມທະວີຍິ່ງໆ ຂຶ້ນ ຈົນກາຍເປັນປະເທດຕ່າງໆ
ແລະຫລາຍຄົນຢູ່ໃນຈຳນວນເຊື້ອສາຍນີ້ຈະເປັນເຖິງຂັ້ນກະສັດ. 7ເຮົາຈະຖືຮັກສາຄຳໝັ້ນສັນຍາ
ຂອງເຮົາທີ່ມີຕໍ່ເຈົ້າ ແລະຕໍ່ເຊື້ອສາຍຂອງເຈົ້າໃນເຊັ່ນຄົນຕໍ່ມາ ໃຫ້ເປັນຄຳໝັ້ນສັນຍາອັນຕະ-
ຫລອດໄປເປັນນິດ ເຮົາຈະເປັນ ພຣະເຈົ້າ ຂອງເຈົ້າ ແລະເປັນ ພຣະເຈົ້າ ຂອງເຊື້ອສາຍຂອງເຈົ້າ
ດ້ວຍ. 8ເຮົາຈະໃຫ້ດິນທີ່ເຈົ້າອາໄສຢູ່ໃນປັດຈຸບັນຖານະຊາວຕ່າງດ້າວນີ້ໃຫ້ແກ່ເຈົ້າ ແລະເຊື້ອ-
ສາຍຂອງເຈົ້າ ດິນແດນ ການາອານ ທັງໝົດຈະເປັນຂອງພວກເຈົ້າຕະຫລອດໄປ ແລະເຮົາກໍຈະ
ເປັນ ພຣະເຈົ້າ ຂອງພວກເຈົ້າ."

9ພຣະເຈົ້າ ຊົງກ່າວກັບ ອັບຣາຮາມ ວ່າ, "ເຈົ້າເອງກໍດີເຊື້ອສາຍຂອງເຈົ້າໃນເຊັ່ນຕໍ່ໄປກໍດີ ຈົ່ງ
ຮັກສາຄຳໝັ້ນສັນຍາຂອງເຮົາ. 10ອັນນີ້ແມ່ນສິ່ງທີ່ເຈົ້າ ແລະເຊື້ອສາຍຂອງເຈົ້າຕ້ອງປະຕິບັດຄື
ຜູ້ຊາຍທຸກຄົນໃນພວກເຈົ້າຕ້ອງເຂົ້າພິທີຕັດ. 11-12ຕັ້ງແຕ່ບັດນີ້ໄປ ເຈົ້າຈະຕ້ອງເຮັດພິທີຕັດໃຫ້
ແກ່ຜູ້ຊາຍທຸກໆ ຄົນ ເມື່ອພວກເຂົາອາຍຸໄດ້ແປດມື້ທັງເດັກທີ່ເກີດມາຈາກພວກຂ້າໃຊ້ ແລະ
ຂ້ອຍຂ້າທີ່ໄຖ່ມາຈາກຊາວຕ່າງດ້າວ ການກະທຳເຊັ່ນນີ້ ຈະສະແດງວ່າ ນັ້ນແມ່ນການສັນຍາ
ລະຫວ່າງເຈົ້າກັບ ເຮົາ. 13ທຸກຄົນຕ້ອງຮັບພິທີຕັດ ແລະການຮັບພິທີຕັດນັ້ນຕ້ອງໝາຍໄວ້ໃນ
ຮ່າງກາຍຂອງພວກເຈົ້າເພື່ອສະແດງໃຫ້ເຫັນວ່າ ຄຳໝັ້ນສັນຍາຂອງເຮົາກັບເຈົ້ານັ້ນ ມີສືບໆ
ໄປເປັນນິດ. 14ຊາຍຜູ້ໃດບໍ່ຮັບພິທີຕັດ ຈະຕ້ອງຖືກຕັດອອກຈາກພີ່ນ້ອງຂອງຕົນເພາະວ່າລາວບໍ່

ຮັກສາຄຳໝັ້ນສັນຍາກັບເຮົາ.”

[15]ພຣະເຈົ້າ ຊົງກ່າວກັບ ອັບຣາຮາມ ອີກວ່າ, “ເຈົ້າບໍ່ຕ້ອງເອີ້ນເມຍຂອງເຈົ້າວ່າ ສາຣາຍ ອີກຕໍ່ໄປ ບັດນີ້ຊື່ຂອງນາງແມ່ນ ຊາຣາ. [16]ເຮົາຈະອວຍພອນໃຫ້ນາງ ແລະຈະໃຫ້ເຈົ້າມີລູກຊາຍທີ່ເກີດຈາກນາງ ເຮົາຈະອວຍພອນໃຫ້ນາງເປັນມານດາຂອງປະຊາຊາດທັງຫລາຍ ແລະກະສັດຫລາຍອົງຈະມາຈາກເຊື້ອສາຍຂອງນາງ.”

[17]ອັບຣາຮາມ ກົ້ມຂາບລົງ ທັງຍິ້ມຫົວໃນໃຈວ່າ, “ຄົນອາຍຸໄດ້ຮ້ອຍປີແລ້ວຈະມີລູກໄດ້ຈັ່ງໃດ?” ແລະ ຊາຣາ ອາຍຸກໍໄດ້ເກົ້າສິບປີແລ້ວຈະມີລູກໄດ້ບໍ? [18]ອັບຣາຮາມ ທູນຕໍ່ ພຣະເຈົ້າ ວ່າ, “ຂ້ານ້ອຍຂໍພຣະອົງປົກປ້ອງຮັກສາ ອິດຊະມາເອນ ໃຫ້ລາວມີຊີວິດຢູ່ທ້ອນ.”

[19]ແຕ່ ພຣະເຈົ້າ ຊົງກ່າວແກ່ເພິ່ນວ່າ, “ເຈົ້າເຂົ້າໃຈຜິດເຈົ້າຈະໄດ້ລູກຊາຍຈາກຊາຣາ ເມຍຂອງເຈົ້າ ແລະຈົ່ງໃສ່ຊື່ໃຫ້ເດັກນັ້ນວ່າ ອີຊາກ ເຮົາຈະຮັກສາຄຳໝັ້ນສັນຍາຂອງເຮົາກັບລາວ ແລະເຊື້ອສາຍຂອງລາວ ເປັນຄຳໝັ້ນສັນຍາອັນຕະຫລອດໄປເປັນນິດ. [20]ເຈົ້າໄດ້ຂໍໃຫ້ເຮົາປົກປ້ອງຮັກສາ ອິດຊະມາເອນ ນີ້ແມ່ນສິ່ງທີ່ເຮົາຈະປະຕິບັດກັບລາວຄືເຮົາຈະອວຍພອນໃຫ້ລາວມີລູກຫລານ ແລະເຊື້ອສາຍຢ່າງຫລວງຫລາຍ ລາວຈະເປັນພໍ່ຂອງເຈົ້າຊາຍສິບສອງອົງ ແລະເຊື້ອ-ສາຍຂອງລາວຈະເປັນປະເທດອັນຍິ່ງໃຫຍ່. [21]ເຮົາຈະຮັກສາຄຳໝັ້ນສັນຍາຂອງເຮົາກັບ ອີຊາກ ລູກຊາຍຂອງເຈົ້າຜູ້ຈະເກີດຈາກ ຊາຣາ ໃນປີໜ້າລະຫວ່າງລະດູນີ້.” [22]ເມື່ອ ພຣະເຈົ້າ ກ່າວຕໍ່ ອັບ-ຣາຮາມ ໝົດແລ້ວ ພຣະອົງກໍສະເດັດຈາກໄປ.

[23]ສັນຕໍ່ມາ ໃນວັນດຽວກັນນັ້ນ ອັບຣາຮາມ ໄດ້ເຮັດພິທີຕັດ ດັ່ງທີ່ ພຣະເຈົ້າ ໄດ້ຊົງສັ່ງໄວ້ໃຫ້ແກ່ລູກຊາຍ ຄື ອິດຊະມາເອນ ພ້ອມທັງຂ້າໃຊ້ທຸກໆ ຄົນ ທັງຜູ້ທີ່ເກີດໃນເຮືອນ ແລະຜູ້ທີ່ຊື້ມາ. [24]ອັບຣາຮາມ ກໍຮັບພິທີຕັດເມື່ອອາຍຸໄດ້ເກົ້າສິບເກົ້າປີ. [25]ແລະ ອິດຊະມາເອນ ກໍຮັບ ເມື່ອອາຍຸໄດ້ສິບສາມປີ. [26-27]ພວກເຂົາທັງສອງໄດ້ຮັບພິທີຕັດມື້ດຽວກັນກັບພວກຂ້າໃຊ້ທຸກຄົນ.

# ບົດທີ 18

## ຄຳສັນຍາກ່ຽວກັບການເກີດຂອງອີຊາກ

[1]ພຣະຜູ້ເປັນເຈົ້າ ໄດ້ປະກົດແກ່ ອັບຣາຮາມ ທີ່ຕົ້ນໄມ້ສັກສິດຂອງ ມາມເຣ ຂະນະທີ່ເພິ່ນນັ່ງຢູ່ທີ່ປະຕູເຕັນເວລາແດດຮ້ອນ. [2]ເມື່ອ ອັບຣາຮາມ ເງີຍໜ້າຂຶ້ນກໍເຫັນຊາຍສາມຄົນຢືນຢູ່ທາງໜ້າເພິ່ນ ເມື່ອເຫັນເຂົາເພິ່ນຈຶ່ງຟ້າວລຸກຂຶ້ນແລ້ວອອກໄປຕ້ອນຮັບກົ້ມຂາບລົງແລ້ວກ່າວວ່າ,

[3]“ທ່ານເຈົ້າຂ້າ ຖ້າຂ້ານ້ອຍເປັນຜູ້ສົມຄວນແກ່ທ່ານ ຈົ່ງແວ່ບ້ານຂ້ານ້ອຍກ່ອນຈະໄປທີ່ອື່ນສາເພາະຂ້ານ້ອຍເປັນຂ້າໃຊ້ຂອງທ່ານ. [4]ຂ້ານ້ອຍຈະສັ່ງໃຫ້ເຂົາເອົານ້ຳມາໃຫ້ທ່ານລ້າງຕີນ ແລ້ວຂໍທ່ານຈົ່ງພັກຜ່ອນຢ່ອນອາລົມກ້ອງຕົ້ນໄມ້ນີ້ກ່ອນ. [5]ຂ້ານ້ອຍຈະເອົາອາຫານໜ້ອຍໜຶ່ງໃຫ້ທ່ານຮັບປະທານ ເພື່ອທ່ານຈະໄດ້ມີແຮງເດີນທາງຕໍ່ໄປເພາະທ່ານໄດ້ມາຮອດບ້ານຂອງຂ້ານ້ອຍແລ້ວ ດັ່ງນັ້ນ ຂ້ານ້ອຍຍິນດີຮັບໃຊ້ທ່ານຢ່າງຈິງໃຈ” ຊາຍທັງສາມຈຶ່ງຕອບວ່າ, “ດີແລ້ວ ຈົ່ງເຮັດຕາມທີ່ເຈົ້າໄດ້ເວົ້ານີ້ສາ.”

[6]ອັບຣາຮາມ ຟ້າວແລ່ນເຂົ້າໄປໃນຜ້າເຕັນ ແລ້ວບອກ ຊາຣາ ວ່າ, “ໄວໆ ຮີບເອົາແປ້ງຢ່າງ

ລະອຽດສາມຖຸມານວດແລ້ວເຮັດເຂົ້າໜົມ.” 7ສ່ວນເພິ່ນກໍແລ່ນໄປຫາຝູງສັດ ແລະເລືອກເອົາງົວ
ນ້ອຍໂຕຕຸ້ຍພີ ມາໃຫ້ຄົນໃຊ້ຂ້າແລ້ວຈັດແຈງເປັນອາຫານ. 8ຄັນແລ້ວ ເພິ່ນກໍເອົາເນີຍ ນໍ້ານົມ
ສົດ ແລະຊີ້ນທີ່ຈັດແຈງແລ້ວນັ້ນ ມາວາງໄວ້ຕໍ່ໜ້າພວກເຂົາທັງສາມ ເມື່ອພວກເຂົາຮັບປະທານ
ຢູ່ນັ້ນ ເພິ່ນກໍຢືນຢູ່ໃກ້ໆພວກເຂົາຢູ່ກ້ອງຕົ້ນໄມ້

9ຕໍ່ມາຊາຍທັງສາມຈຶ່ງຖາມອັບຣາຮາມວ່າ, “ຊາຣາເມຍຂອງເຈົ້າຢູ່ໃສ? “ເພິ່ນຕອບວ່າ,
“ນາງຢູ່ໃນຜ້າເຕັນພຸ້ນ.” 10ແຂກທີ່ມາຢັ້ງມຢາມກ່າວຕໍ່ໄປວ່າ, “ເຮົາຂໍບອກຕໍ່ເຈົ້າວ່າ ອີກເກົ້າ
ເດືອນນາງຊາຣາຈະມີລູກ ແລະເມື່ອຮອດເວລານັ້ນ ເຮົາຈະກັບມາອີກ” ນາງຊາຣາຊຶ່ງຢືນຟັງຢູ່
ໃກ້ປະຕູເຕັນຂ້າງຫລັງສາມີກໍໄດ້ຍິນເລື່ອງນີ້. 11ອັບຣາຮາມກັບຊາຣາຕ່າງກໍເຖົ້າຫລາຍແລ້ວ
ອີກປະການໜຶ່ງຊາຣາກໍເຊົາເປັນປະຈຳເດືອນມາດົນແລ້ວ. 12ດັ່ງນັ້ນນາງຈຶ່ງຍິ້ມຫົວໃນໃຈ ແລະ
ເວົ້າວ່າ, “ດຽວນີ້ຂ້ອຍກໍເຖົ້າເກີນກວ່າທີ່ຈະມີລູກໄດ້ແລ້ວ ອີກຢ່າງໜຶ່ງຜົວຂອງຂ້ອຍກໍເຖົ້າຫລາຍ
ແລ້ວ ຂ້ອຍຍັງຈະມີຄວາມຊົມຊື່ນຍິນດີຢູ່ບໍ?”

13ແລ້ວພຣະຜູ້ເປັນເຈົ້າໄດ້ຖາມອັບຣາຮາມວ່າ, “ເປັນຫຍັງນາງຊາຣາຈຶ່ງຍິ້ມຫົວ ແລະເວົ້າ
ວ່າ ເຮົາຈະມີລູກແທ້ບໍ ໃນເມື່ອເຮົາເຖົ້າແລ້ວເຊັ່ນນີ້? 14ມີຫຍັງທີ່ມັນຍາກສຳລັບພຣະຜູ້ເປັນເຈົ້າ
ຫລື? ໃນໄລຍະເກົ້າເດືອນເຮົາຈະກັບມາອີກ ແລະນາງຊາຣາຈະມີລູກຊາຍຜູ້ໜຶ່ງ.” 15ຍ້ອນ
ຄວາມຢ້ານກົວຂອງນາງຊາຣາຈຶ່ງປະຕິເສດວ່າ, “ຂ້ານ້ອຍບໍ່ໄດ້ຍິ້ມຫົວ” ພຣະອົງຊົງຕອບວ່າ,
“ແມ່ນແລ້ວ ເຈົ້າຍິ້ມຫົວແທ້.”

## ອັບຣາຮາມອະທິຖານສຳລັບເມືອງໂຊໂດມ

16ຫລັງຈາກນັ້ນຊາຍທັງສາມກໍຈາກໄປສູ່ບ່ອນທີ່ພວກເຂົາຈະສາມາດເຫັນເມືອງໂຊໂດມໄດ້
ອັບຣາຮາມກໍໄປສົ່ງພວກເຂົາ. 17ພຣະຜູ້ເປັນເຈົ້າຊົງຄຶດວ່າ, “ເຮົາບໍ່ໄດ້ປິດບັງອັບຣາຮາມໃນ
ສິ່ງທີ່ເຮົາຈະກະທຳນີ້. 18ເຊື້ອສາຍຂອງລາວຈະກາຍເປັນປະເທດທີ່ຍິ່ງໃຫຍ່ ແລະມີອຳນາດ
ຊົນຊາດທັງປວງໃນໂລກກໍຈະຂໍຮ້ອງເຮົາໃຫ້ອວຍພອນພວກເຂົາເໝືອນດັ່ງເຮົາໄດ້ອວຍພອນໃຫ້
ລາວ. 19ເຮົາໄດ້ເລືອກເອົາລາວກໍເພື່ອວ່າລາວຈະໄດ້ສັ່ງສອນພວກລູກຊາຍ ແລະຫລານເຫລັນ
ຂອງລາວໃຫ້ເຊື່ອຟັງຂໍ້ບັນຍັດຂອງເຮົາໂດຍປະພຶດໃນສິ່ງທີ່ຖືກຕ້ອງ ແລະຊອບທຳແລ້ວເຮົາກໍ
ຈະປະຕິບັດທຸກໆຢ່າງ ເພື່ອລາວຕາມທີ່ເຮົາໄດ້ສັນຍາໄວ້.”

20ຕໍ່ມາພຣະຜູ້ເປັນເຈົ້າຊົງກ່າວວ່າ, “ມີສຽງຟ້ອງຮ້ອງອັນໜ້າຢ້ານກົວຕໍ່ສູ້ເມືອງໂຊໂດມກັບ
ເມືອງໂກໂມຣາ ແລະຄວາມຜິດບາບຂອງຊາວເມືອງເອງກໍໜັກໜາຫລາຍ. 21ເຮົາຈະລົງມາພິສູດ
ເບິ່ງວ່າ ການກ່າວຫາທີ່ເຮົາໄດ້ຍິນນັ້ນ ຖືກຕ້ອງຫລືບໍ່? ເຮົາຈະຄົ້ນຫາໃຫ້ຮູ້ຄວາມຈິງ.”

22ຕໍ່ມາ ຊາຍເຫລົ່ານັ້ນກໍຈາກໄປ ແລະມຸ້ງໜ້າສູ່ເມືອງໂຊໂດມ ແຕ່ພຣະຜູ້ເປັນເຈົ້າຍັງຢູ່ກັບ
ອັບຣາຮາມ. 23ອັບຣາຮາມຫຍັບເຂົ້າມາໃກ້ພຣະຜູ້ເປັນເຈົ້າ ແລະທູນຖາມວ່າ, “ພຣະອົງຈະ
ທຳລາຍຄົນຊອບທຳກັບຄົນອະທຳໄປພ້ອມໆ ກັນແທ້ຫລື? 24ຖ້າວ່າມີຄົນຊອບທຳຫ້າສິບຄົນໃນ
ເມືອງ ພຣະອົງກໍຈະທຳລາຍໝົດເມືອງບໍ? ພຣະອົງຈະບໍ່ປ່ອຍເມືອງນີ້ໄວ້ເພື່ອຊ່ອຍຫ້າສິບຄົນ
ນັ້ນໃຫ້ພົ້ນຫລື? 25ແນ່ນອນທີ່ສຸດ ພຣະອົງຈະບໍ່ຂ້າຄົນຊອບທຳພ້ອມກັບຄົນອະທຳ ພຣະອົງຈະ
ບໍ່ກະທຳເຊັ່ນນັ້ນ ຄົນຊອບທຳຈະຖືກລົງໂທດເໝືອນດັ່ງຄົນອະທຳເປັນໄປບໍ່ໄດ້ເດັດຂາດ ຜູ້ພິ-

ພາກສາໂລກຕ້ອງກະທຳທຸກສິ່ງຢ່າງຍຸດຕິທຳ."
[26]ພຣະຜູ້ເປັນເຈົ້າຊົງຕອບວ່າ, "ຖ້າເຮົາພົບຄົນຊອບທຳຫ້າສິບຄົນໃນເມືອງໂຊໂດມ ເຮົາຈະ
ໄວ້ຊີວິດຄົນທັງເມືອງ ເພາະເຫັນແກ່ຄົນຊອບທຳຫ້າສິບຄົນນັ້ນ."
[27]ອັບຣາຮາມທູນອີກວ່າ, "ຂ້າແດ່ພຣະຜູ້ເປັນເຈົ້າ ຂໍພຣະອົງຊົງໂຜດອະໄພທີ່ຂ້ານ້ອຍກ້າ
ເວົ້າກັບພຣະອົງອີກ ຂ້ານ້ອຍເປັນພຽງມະນຸດ ແລະອາດເປັນການບໍ່ສົມຄວນທີ່ມາຮ້ອງຂໍຕໍ່ພຣະ-
ອົງ. [28]ແຕ່ຖ້າບາງທີ່ມີຄົນຊອບທຳສີ່ສິບຫ້າຄົນເທົ່ານັ້ນ ແທນທີ່ຈະມີຫ້າສິບ ພຣະອົງກໍຈະທຳ-
ລາຍໝົດເມືອງເພາະຍ້ອນຂາດຫ້າຄົນນັ້ນຫລື? ພຣະຜູ້ເປັນເຈົ້າຊົງຕອບວ່າ, "ເຮົາຈະບໍ່ທຳລາຍ
ເມືອງນັ້ນ ຖ້າເຮົາພົບຄົນຊອບທຳສີ່ສິບຫ້າຄົນ."
[29]ອັບຣາຮາມທູນຖາມຕໍ່ໄປວ່າ, "ບາງທີຫາກມີພຽງສີ່ສິບຄົນເດ?" ພຣະອົງຕອບວ່າ, "ເຮົາ
ຈະບໍ່ທຳລາຍເມືອງນັ້ນຖ້າເຮົາພົບສີ່ສິບຄົນ."
[30]ອັບຣາຮາມເວົ້າວ່າ, "ຂ້າແດ່ພຣະຜູ້ເປັນເຈົ້າຂໍພຣະອົງຢ່າຟ້າວພຣະພິໂລດທ້ອນ ຂ້ານ້ອຍ
ຂໍຖາມອີກວ່າ ຖ້າມີຄົນສາມສິບຄົນເດ?" ພຣະອົງກ່າວວ່າ, "ເຮົາຈະບໍ່ກະທຳການນັ້ນ ຖ້າເຮົາ
ພົບສາມສິບຄົນ."
[31]ອັບຣາຮາມທູນວ່າ, "ຂ້າແດ່ພຣະຜູ້ເປັນເຈົ້າ ຂໍພຣະອົງຊົງໂຜດອະໄພທີ່ຂ້ານ້ອຍກ້າເວົ້າ
ກັບພຣະອົງອີກ ສົມມຸດວ່າມີພຽງຊາວຄົນເທົ່ານັ້ນເດ" ພຣະອົງຕອບວ່າ "ເຮົາຈະບໍ່ທຳລາຍ
ເມືອງນັ້ນຖ້າເຮົາພົບຊາວຄົນ."
[32]ອັບຣາຮາມທູນຖາມອີກວ່າ, "ຂ້າແດ່ພຣະຜູ້ເປັນເຈົ້າໂຜດຢ່າພຣະພິໂລດຂ້ານ້ອຍທ້ອນ
ຂ້ານ້ອຍຂໍທູນພຣະອົງອີກຄັ້ງໜຶ່ງເທົ່ານັ້ນ ພຣະອົງຈະເຮັດແນວໃດຖ້າມີພຽງສິບຄົນ?" ພຣະ-
ອົງຕອບວ່າ, "ເຮົາກໍຈະບໍ່ທຳລາຍເມືອງນັ້ນເໝືອນກັນຫາກມີພຽງແຕ່ສິບຄົນ."
[33]ຫລັງຈາກທີ່ພຣະຜູ້ເປັນເຈົ້າຊົງສົນທະນາກັບອັບຣາຮາມສິ້ນສຸດລົງແລ້ວ ພຣະອົງກໍສະ-
ເດັດຈາກໄປ ແລະອັບຣາຮາມກໍກັບຄືນເມືອບ້ານຂອງຕົນ.

# ບົດທີ 19

## ຄວາມຊົ່ວຊ້າຂອງຊາວເມືອງໂຊໂດມ

[1]ເມື່ອທູດຂອງພຣະຜູ້ເປັນເຈົ້າສອງອົງເຂົ້າໄປໃນເມືອງໂຊໂດມເວລາຄໍ່າ ໂລດກໍນັ່ງຢູ່ທີ່ປະຕູ
ບ່ອນຊາວເມືອງພົບປະສົນທະນາກັນ ເມື່ອໂລດເຫັນທ່ານທັງສອງກໍຟ້າວແລ່ນອອກໄປຕ້ອນຮັບ.
ລາວກົ້ມຂາບລົງ
[2]ແລະເວົ້າວ່າ, "ອາດຍາເອີຍ ຂ້ານ້ອຍຂໍໄຫວ້ວອນທ່ານກະລຸນາແວ່ເຂົ້າໄປໃນເຮືອນຂ້ານ້ອຍ
ກ່ອນທ້ອນ ທ່ານຈະລ້າງຕີນ ແລະພັກແຮມຄືນກໍໄດ້ ຄັນຕອນເຊົ້າມາທ່ານຈຶ່ງຄ່ອຍເດີນທາງຕໍ່
ໄປ" ແຕ່ທູດຂອງພຣະຜູ້ເປັນເຈົ້າຕອບວ່າ, "ບໍ່ດອກ ພວກເຮົາຈະຄ້າງຄືນຢູ່ແຄມທາງຖະໜົນ
ຂອງເມືອງນີ້."
[3]ແຕ່ໂລດກໍຂໍຮ້ອງອີກ ແລະໃນທີ່ສຸດ ຊາຍທັງສອງກໍຕົກລົງໄປເຮືອນຂອງລາວ ໂລດຈຶ່ງໄດ້
ຈັດແຈ່ງເຂົ້າໜົມແລະອາຫານອັນດີມາຕ້ອນຮັບ. [4]ກ່ອນທ່ານທັງສອງຈະເຂົ້າໄປນອນພວກຜູ້

ຊາຍຊາວເມືອງໂຊໂດມທັງໜຸ່ມ ແລະເຖົ້າໄດ້ພາກັນອ້ອມເຮືອນນັ້ນໄວ້. 5ພວກເຂົາຮ້ອງໂລດ
ອອກມາແລະຖາມວ່າ, "ຜູ້ຊາຍທີ່ມາພັກເຊົາຢູ່ບ້ານເຈົ້າຄືນນີ້ຢູ່ໃສ? ຈົ່ງພາພວກເຂົາອອກມາ
ເພື່ອເຮົາຈະໄດ້ສົມສູ່ກັບເຂົາ."

6-7ໂລດອອກມາຫາພວກຊາວເມືອງນັ້ນແລ້ວອັດປະຕູໄວ້ ລາວເວົ້າກັບເຂົາວ່າ, "ພີ່ນ້ອງເອີຍ
ເຮົາຂໍນຳ ຢ່າເຮັດແນວບໍ່ດີເຊັ່ນນີ້ເທາະ. 8ເອົາຢ່າງນີ້ສາ ເຮົາມີລູກສາວຢູ່ສອງຄົນທີ່ຍັງບໍ່ເຄີຍ
ຜ່ານຜູ້ຊາຍມາຈັກເທື່ອ ເຮົາຈະນຳອອກມາໃຫ້ ທ່ານຈະເຮັດກັບພວກເຂົາແນວໃດກໍໄດ້ຕາມໃຈ
ມັກ ແຕ່ຂໍຢ່າເຮັດສິ່ງໃດໃຫ້ແກ່ຊາຍສອງຄົນນີ້ ເພາະເພິ່ນເປັນແຂກຂອງເຮົາ ເຮົາຈຳເປັນຕ້ອງ
ຄຸ້ມຄອງພວກເພິ່ນ."

9ແຕ່ພວກເຂົາຕອບໂລດວ່າ, "ຖອຍອອກໄປບັກຕ່າງດ້າວ ມຶງແມ່ນໃຜທີ່ບັງອາດມາສັ່ງສອນ
ພວກກູ? ຫລີກອອກໄປ ຖ້າບໍ່ດັ່ງນັ້ນກູຈະເຮັດກັບມຶງໜັກກວ່າເຮັດກັບພວກເຂົາ" ພວກເຂົາຊຸກ
ໂລດໃຫ້ຖອຍໄປ ແລ້ວຈະພາກັນພັງປະຕູເຂົ້າໄປ.

10ແຕ່ຊາຍທັງສອງທີ່ຢູ່ໃນເຮືອນນັ້ນໄຂປະຕູອອກມາດຶງໂລດເຂົ້າໄປໃນເຮືອນແລ້ວອັດປະຕູ
ໄວ້. 11ໃນທັນໃດນັ້ນ ຊາຍທັງສອງກໍບັນດານໃຫ້ພວກອັນຕະພານຢູ່ຂ້າງນອກນັ້ນບໍ່ເຫັນຮຸ່ງ
ດັ່ງນັ້ນພວກເຂົາຈຶ່ງບໍ່ສາມາດເຫັນປະຕູເຮືອນໄດ້.

## ໂລດໜີອອກຈາກເມືອງໂຊໂດມ

12ຊາຍທັງສອງຖາມໂລດວ່າ, "ເຈົ້າມີໃຜອີກແດ່ຢູ່ໃນເມືອງນີ້? ຈົ່ງເອົາພວກລູກຊາຍພວກລູກ
ສາວແລະພີ່ນ້ອງຂອງເຈົ້າອອກຈາກເມືອງນີ້ໄວ ເພາະວ່າພວກເຮົາກຳລັງຈະທຳລາຍບ່ອນນີ້.
13ພຣະຜູ້ເປັນເຈົ້າໄດ້ຍິນສຽງຟ້ອງຮ້ອງອັນໜ້າຢ້ານກົວຕໍ່ສູ້ປະຊາຊົນເຫລົ່ານີ້ ຈຶ່ງຊົງໃຊ້ພວກ
ເຮົາມາທຳລາຍເມືອງໂຊໂດມເສຍ."

14ຄັນແລ້ວໂລດຈຶ່ງໄປເວົ້າກັບພວກຄູ່ໝັ້ນຂອງລູກສາວຕົນວ່າ, "ຈົ່ງໜີອອກຈາກເມືອງນີ້ໄປ
ໄວໆ ເພາະພຣະຜູ້ເປັນເຈົ້າຈະທຳລາຍບ່ອນນີ້" ແຕ່ພວກເຂົາຄິດວ່າ ໂລດເວົ້າຫລິ້ນ.

15ເມື່ອເວລາຮຸ່ງເຊົ້າ ພວກທູດຂອງພຣະເຈົ້າພະຍາຍາມເລັ່ງໂລດໂດຍເວົ້າວ່າ, "ໄວໆ ຈົ່ງ
ເອົາເມຍ ແລະລູກສາວສອງຄົນຂອງເຈົ້າອອກໜີໄປ ເພື່ອວ່າພວກເຈົ້າຈະບໍ່ເສຍຊີວິດ ເມື່ອ
ເມືອງນີ້ຖືກທຳລາຍ." 16ແຕ່ໂລດຍັງສົງໄສຢູ່ ເຖິງຢ່າງໃດກໍດີ ພຣະຜູ້ເປັນເຈົ້າຍັງສົງສານລາວ
ດັ່ງນັ້ນທູດທັງສອງຈຶ່ງດຶງມືລາວ ພ້ອມທັງເມຍ ແລະລູກສາວພາກັນອອກຈາກເມືອງນີ້ໄປ.
17ເມື່ອພວກເຂົາຖືກນຳພາອອກຈາກເມືອງໄປແລ້ວ ທູດຂອງພຣະເຈົ້າອົງໜຶ່ງເວົ້າວ່າ, "ຈົ່ງຟ້າວ
ໜີເອົາຕົວລອດ ຢ່າຫລຽວຄືນຫລັງ ແລະຢ່າຢຸດຢູ່ຮ່ອມພູ ໃຫ້ພາກັນແລ່ນຂຶ້ນໄປເທິງພູນ້ອຍພຸ້ນ
ເພື່ອວ່າເຈົ້າຈະບໍ່ຕາຍ."

18-19ແຕ່ໂລດຕອບວ່າ, "ບໍ່ດອກທ່ານເອີຍ ທ່ານມີຄວາມເມດຕາກະລຸນາ ແລະມີບຸນຄຸນຕໍ່
ຂ້ານ້ອຍຫລາຍແລ້ວທີ່ໄດ້ຊ່ວຍຊີວິດຂອງຂ້ານ້ອຍໄວ້ ແຕ່ວ່າພູນ້ອຍນັ້ນຍັງຢູ່ໄກຫລາຍ ໄພວິບັດ
ຈະຕາມມາທັນຂ້ານ້ອຍ ແລະຂ້ານ້ອຍກໍຈະເສຍຊີວິດກ່ອນຈະໄປເຖິງທີ່ນັ້ນ. 20ທ່ານເຫັນເມືອງ
ນ້ອຍນັ້ນບໍ? ເມືອງນັ້ນຢູ່ໃກ້ພໍທີ່ຂ້ານ້ອຍຈະໄປເຖິງກ່ອນໄດ້ ໃຫ້ຂ້ານ້ອຍໄປທີ່ນັ້ນສາ ທ່ານເຫັນ
ແລ້ວວ່າມັນເປັນພຽງເມືອງນ້ອຍໆ ແລະຊີວິດຂອງຂ້ານ້ອຍອາດຈະປອດໄພ."

[21]ທູດຂອງ ພຣະເຈົ້າ ຕອບວ່າ, “ເຮົາຕົກລົງ ເຮົາຈະບໍ່ທຳລາຍເມືອງນັ້ນ. [22]ຮີບຟ້າວແລ່ນໄປ
ໄວໆ ເຮົາຈະບໍ່ທຳສິ່ງໜຶ່ງສິ່ງໃດກ່ອນເຈົ້າຈະໄປຮອດທີ່ນັ້ນ” ແລ້ວທູດຂອງ ພຣະເຈົ້າ ກໍປະພວກ
ເຂົາໄວ້ທີ່ນັ້ນ ຍ້ອນ ໂລດ ເວົ້າວ່າບ່ອນນັ້ນນ້ອຍ ເມືອງນັ້ນຈຶ່ງມີຊື່ວ່າ ໂຊອາ.

## ການທຳລາຍເມືອງໂຊໂດມ ແລະເມືອງໂກໂມຣາ

[23]ເມື່ອ ໂລດ ໄປເຖິງ ເມືອງ ໂຊອາ ຕາເວັນກໍກຳລັງຂຶ້ນ [24]ແລ້ວ ພຣະຜູ້ເປັນເຈົ້າ ຈຶ່ງຊົງ ເຮັດໃຫ້
ໄຟແລະ ມາດ ມາ ແຕ່ທ້ອງຟ້າ, ຕົກລົງ ມາ ໃສ່ ເມືອງ ໂຊໂດມ ແລະ ເມືອງ ໂກໂມຣາ. [25]ດັ່ງນັ້ນ
ພຣະຜູ້ເປັນເຈົ້າ ຈຶ່ງທຳລາຍສອງເມືອງ ແລະຮ່ອມພູທັງໝົດພ້ອມທັງປະຊາຊົນທຸກຄົນໃນເມືອງ
ແລະພືດພັນຕ່າງໆ ທີ່ເກີດຂຶ້ນຈາກດິນ. [26]ແຕ່ເມຍຂອງໂລດໄດ້ຫລຽວຄືນຫລັງ ດັ່ງນັ້ນນາງຈຶ່ງ
ກາຍເປັນເສົາເກືອ.

[27]ຕັ້ງແຕ່ເຊົ້າມືດຂອງມື້ຕໍ່ມາ ອັບຣາຮາມ ຈຶ່ງຟ້າວໄປບ່ອນທີ່ເພິ່ນເຝົ້າ ພຣະຜູ້ເປັນເຈົ້າ. [28]ເພິ່ນ
ຫລຽວລົງເບິ່ງເມືອງ ໂຊໂດມ ເມືອງ ໂກໂມຣາ ແລະຮ່ອມພູທັງໝົດຈຶ່ງເຫັນຄວັນໄຟພຸ່ງຂຶ້ນມາຈາກ
ບ່ອນນັ້ນເໝືອນດັ່ງຄວັນໄຟທີ່ພຸ່ງຂຶ້ນມາຈາກເຕົາຫລອມໃຫຍ່.

[29]ແຕ່ ເມື່ອ ພຣະເຈົ້າ ຊົງທຳລາຍ ເມືອງທັງສອງຢູ່ໃນຮ່ອມພູນັ້ນ ພຣະອົງຍັງຈື່ຈຳຄຳຮ້ອງຂໍ
ຂອງ ອັບຣາຮາມຢູ່ ໂດຍຊ່ວຍ ໂລດ ໃຫ້ພົ້ນຈາກອັນຕະລາຍ.

## ກົກເຄົ້າຂອງພວກໂມອາບ ແລະອຳໂມນ

[30]ໂລດ ມີຄວາມຢ້ານຕໍ່ເຫດການທີ່ຜ່ານມາ ຈົນບໍ່ຢາກອາໄສຢູ່ເມືອງ ໂຊອາ ດັ່ງນັ້ນລາວຈຶ່ງ
ພາລູກສາວທັງສອງຍ້າຍໄປອາໄສຢູ່ໃນຖ້ຳທີ່ພູນ້ອຍ. [31]ຜູ້ເອື້ອຍຈຶ່ງເວົ້າຕໍ່ນ້ອງວ່າ, “ພໍ່ພວກເຮົາ
ກໍເຖົ້າແກ່ແລ້ວ ແລະບໍ່ມີລູກຊາຍຂອງຜູ້ໃດເລີຍເຫລືອຢູ່ໃນໂລກນີ້ ທີ່ຈະມາແຕ່ງງານກັບພວກ
ເຮົາ ເພື່ອວ່າເຮົາຈະມີລູກສືບໜໍ່ແທນແນວຕາມທຳນຽມ. [32]ມາເທາະ ເຮົາຈົ່ງ ເອົາເຫລົ້າໃຫ້ພໍ່ດື່ມ
ໃຫ້ເມົາ ແລ້ວຮ່ວມປະເວນີກັບເພິ່ນ ເພື່ອຈະໄດ້ລູກຈາກພໍ່ຂອງພວກເຮົາ.”

[33]ໃນຄືນນັ້ນ ພວກນາງໄດ້ເອົາເຫລົ້າອະງຸ່ນໃຫ້ພໍ່ດື່ມຈົນເມົາ ແລ້ວເອື້ອຍກໍຮ່ວມປະເວນີກັບພໍ່
ແຕ່ພໍ່ບໍ່ຮູ້ຫຍັງເລີຍຍ້ອນຄວາມມຶນເມົາ. [34]ມື້ຕໍ່ມາເອື້ອຍຈຶ່ງເວົ້າກັບນ້ອງວ່າ, “ຂ້ອຍໄດ້ຮ່ວມປະ-
ເວນີກັບພໍ່ແລ້ວຄືນວານນີ້ ຄືນມື້ແລງນີ້ພວກເຮົາຕ້ອງເຮັດໃຫ້ເພິ່ນເມົາອີກ ແລ້ວແມ່ນທີເຈົ້າຈະ
ເຮັດຄືກັບຂ້ອຍ ຄັນແລ້ວພວກເຮົາທັງສອງກໍຈະໄດ້ລູກນຳພໍ່. [35]ໃນຄືນນັ້ນພວກເຂົາຈຶ່ງ ເອົາ
ເຫລົ້າໃຫ້ພໍ່ດື່ມຈົນ ເມົາ ແລ້ວຜູ້ເປັນນ້ອງກໍຮ່ວມປະເວນີກັບພໍ່ ຍ້ອນຄວາມມຶນເມົາເພິ່ນຈຶ່ງບໍ່ຮູ້
ເລື່ອງນີ້ເລີຍ.

[36]ດ້ວຍວິທີນີ້ລູກສາວຂອງ ໂລດ ທັງສອງຈຶ່ງຖືພາ. [37]ຜູ້ເອື້ອຍໄດ້ລູກຊາຍຊື່ ໂມອາບ ລາວໄດ້
ເປັນບັນພະບູລຸດຂອງຊາວ ໂມອາບ ມາຈົນຮອດປັດຈຸບັນນີ້. [38]ຜູ້ນ້ອງໄດ້ລູກຊາຍຜູ້ໜຶ່ງຄືກັນຊື່
ເບັນ-ອຳມີ ລາວໄດ້ເປັນບັນພະບູລຸດຂອງຊາວ ອຳໂມນ ມາຈົນເຖິງປັດຈຸບັນນີ້.

# ບົດທີ 20

## ອັບຣາຮາມແລະອາບີເມເລັກ

[1]ອັບຣາຮາມ ໄດ້ຍ້າຍຈາກເມືອງ ມາມເຣ ໄປສູ່ເຂດ ເນເກັບ ແລ້ວໄດ້ຕັ້ງຖິ່ນຖານອາໄສຢູ່ລະ-

ຫວ່າງເມືອງກາເດັດ ແລະເມືອງຊູເຣ ໃນເວລານັ້ນເພິ່ນກໍໄດ້ພັກພາອາໄສຢູ່ເມືອງເກຣາ. 2ເພິ່ນ
ເວົ້າວ່ານາງຊາຣາຜູ້ເປັນເມຍ ເປັນນ້ອງສາວຂອງເພິ່ນ ດັ່ງນັ້ນ ອາບີເມເລັກເຈົ້າຊີວິດແຫ່ງ
ເກຣາຈຶ່ງໄດ້ເອົານາງຊາຣາໄປ.

3ໃນຄືນນັ້ນ ພຣະເຈົ້າໄດ້ປະກົດໃນຄວາມຝັນຂອງເຈົ້າຊີວິດ ແລະເວົ້າວ່າ, "ເຈົ້າຈະຕາຍ
ເຫດວ່ານາງຊາຣາເປັນຍິງທີ່ໄດ້ແຕ່ງງານແລ້ວ."

4ແຕ່ວ່າກະສັດອາບີເມເລັກ ຊຶ່ງບໍ່ໄດ້ແຕະຕ້ອງນາງແຕ່ຢ່າງໃດເລີຍໄດ້ທູນວ່າ, "ຂ້າພະອົງ
ເຈົ້າ ພຣະອົງຈະຂ້າຄົນທີ່ບໍ່ມີຄວາມຜິດຫລື. 5ອັບຣາຮາມເວົ້າວ່ານາງເປັນນ້ອງສາວຂອງຕົນ
ແລະນາງຊາຣາເອງກໍເວົ້າວ່າລາວເປັນອ້າຍຂອງນາງ ຂ້ານ້ອຍໄດ້ກະທຳສິ່ງນັ້ນດ້ວຍຄວາມບໍ-
ລິສຸດໃຈ ແລະບໍ່ໄດ້ເຮັດຜິດຫຍັງເລີຍ."

6ພຣະເຈົ້າໄດ້ຊົງຕອບໃນຄວາມຝັນແກ່ກະສັດວ່າ, "ຖືກແລ້ວເຮົາກໍຮູ້ວ່າເຈົ້າໄດ້ກະທຳດ້ວຍ
ຄວາມບໍລິສຸດໃຈ ດັ່ງນີ້ແຫລະ ເຮົາຈຶ່ງຮັກສາເຈົ້າໄວ້ບໍ່ໃຫ້ເຮັດຜິດຕໍ່ເຮົາດ້ວຍການແຕະຕ້ອງ
ນາງ. 7ບັດນີ້ ຈົ່ງເອົາຜູ້ຍິງໄປສົ່ງໃຫ້ຜົວຂອງນາງຄືນສາ ຜົວຂອງນາງເປັນຜູ້ປະກາດພຣະທຳ
ຂອງເຮົາ ລາວຈະອ້ອນວອນໃຫ້ເຈົ້າເພື່ອເຈົ້າຈະບໍ່ຕາຍ ແຕ່ເຮົາຂໍເຕືອນເຈົ້າວ່າ ຖ້າເຈົ້າບໍ່ເອົາ
ນາງໄປສົ່ງຄືນ ເຈົ້າ ແລະຄອບຄົວຂອງເຈົ້າທັງໝົດຈະຕ້ອງຕາຍ."

8ແຕ່ເຊົ້າມືດຂອງມື້ໃໝ່ ກະສັດອາບີເມເລັກໄດ້ເອີ້ນຂ້າໃຊ້ມາໝົດທຸກຄົນ ແລະໄດ້ຊົງເລົ່າ
ເຫດການນັ້ນໃຫ້ພວກເຂົາຟັງ ພວກເຂົາຈຶ່ງມີຄວາມຢ້ານກົວຫລາຍ. 9ຕໍ່ມາ ກະສັດອາບີເມເລັກ
ຈຶ່ງໄດ້ເອີ້ນອັບຣາຮາມມາແລະໄດ້ຖາມເພິ່ນວ່າ, "ເປັນຫຍັງເຈົ້າຈຶ່ງໄດ້ເຮັດເຊັ່ນນີ້ແກ່ພວກເຮົາ?
ເຮົາໄດ້ເຮັດຜິດຫຍັງແກ່ເຈົ້າແດ່ ເຈົ້າຈຶ່ງໄດ້ນຳເອົາຄວາມບາບອັນຍິ່ງໃຫຍ່ມາໃຫ້ເຮົາ ແລະລາ-
ຊະອານາຈັກຂອງເຮົາ? ການທີ່ເຈົ້າໄດ້ເຮັດແກ່ເຮົານັ້ນ ບໍ່ເປັນການສົມຄວນເລີຍ. 10ເປັນຫຍັງ
ເຈົ້າຈຶ່ງເຮັດເຊັ່ນນີ້?

11ອັບຣາຮາມຈຶ່ງກາບທູນວ່າ, "ຂ້ານ້ອຍຄິດວ່າໃນທີ່ນີ້ບໍ່ມີໃຜຢ້ານຢຳການຕັດສິນຂອງພຣະ-
ເຈົ້າ ແລະຄິດວ່າເຂົາຕ້ອງຂ້າ ຂ້ານ້ອຍ ເພື່ອຈະເອົາເມຍຂອງຂ້ານ້ອຍໄປ. 12ທີ່ຈິງນາງເອງກໍ
ເປັນນ້ອງສາວຂອງຂ້ານ້ອຍແທ້ ນາງເປັນລູກຕ່າງແມ່ເທົ່ານັ້ນ ແລະຂ້ານ້ອຍໄດ້ແຕ່ງງານກັບ
ນາງ. 13ດັ່ງນັ້ນ ເມື່ອພຣະເຈົ້າໄດ້ໃຫ້ຂ້ານ້ອຍໜີຈາກເຮືອນຂອງບິດາໄປສູ່ດິນແດນຕ່າງປະ-
ເທດ ຂ້ານ້ອຍຈຶ່ງເວົ້າກັບນາງວ່າ ເຈົ້າຕ້ອງສະແດງຄວາມຊື່ສັດຕໍ່ຂ້ອຍໃນທຸກໆບ່ອນທີ່ເຮົາໄປ
ໂດຍເວົ້າເຖິງຂ້ອຍວ່າ ຂ້ອຍເປັນອ້າຍຂອງເຈົ້າ."

14ຄັນຕໍ່ມາກະສັດອາບີເມເລັກ ກໍສົ່ງນາງຊາຣາຄືນໃຫ້ອັບຣາຮາມ. ພ້ອມດຽວກັນນັ້ນ ພະ
ອົງຍັງໄດ້ເອົາຝູງແກະ, ຝູງງົວ ແລະຂ້າໃຊ້ໃຫ້ເພິ່ນ ອີກ. 15ພຣະອົງເວົ້າກັບອັບຣາຮາມວ່າ,
"ບ່ອນນີ້ແມ່ນຖິ່ນຂອງເຮົາທັງໝົດ ເຈົ້າຈະອາໄສຢູ່ບ່ອນໃດກໍໄດ້ຕາມແຕ່ເຈົ້າຕ້ອງການ."

16ແລ້ວພະອົງຈຶ່ງເວົ້າຕໍ່ນາງຊາຣາວ່າ, "ເຮົາເອົາເງິນພັນຫລຽນໃຫ້ອ້າຍຂອງເຈົ້າ ເພື່ອເປັນຂໍ້
ພິສູດໃຫ້ທຸກຄົນທີ່ຢູ່ນຳເຈົ້າເຫັນວ່າ ເຈົ້າເປັນຄົນສັດຊື່ ແລະບໍ່ໄດ້ເຮັດຜິດຫຍັງເລີຍ."

17ຍ້ອນເລື່ອງນາງຊາຣາເມຍຂອງອັບຣາຮາມ ພຣະເຈົ້າຈຶ່ງເຮັດໃຫ້ພວກຜູ້ຍິງທຸກຄົນທີ່ຢູ່ໃນ
ພະລາຊະວັງ ຂອງກະສັດອາບີເມເລັກບໍ່ມີລູກ. 18ສະນັ້ນ ຍ້ອນການອ້ອນວອນຂອງອັບຣາ-

ຣາມ ເພື່ອກະສັດ ອາບີເມເລັກ ພຣະເຈົ້າ ຈຶ່ງຊົງ ໂຜດໃຫ້ພະອົງດີເປັນປົກກະຕິ ພຣະເຈົ້າ ຊົງ
ໂຜດໃຫ້ມະເຫສີ ແລະພວກຂ້າໃຊ້ຍິງທັງຫລາຍດີ ດັ່ງນັ້ນ ພວກເຂົາຈຶ່ງມີລູກໄດ້.

# ບົດທີ 21

## ການເກີດຂອງອີຊາກ

1ພຣະຜູ້ເປັນເຈົ້າ ຊົງ ໂຜດຊ່ອຍນາງ ຊາຣາ ຕາມທີ່ພຣະອົງຊົງສັນຍາໄວ້ 2ນາງໄດ້ຖືພາ ແລະ
ໄດ້ລູກຊາຍຜູ້ໜຶ່ງ ໃຫ້ ອັບຣາຮາມ ເມື່ອ ເພິ່ນ ເຖົ້າ ແກ່ແລ້ວ ເດັກນ້ອຍ ນັ້ນ ໄດ້ ເກີດ ຕາມ ເວລາທີ່
ພຣະເຈົ້າ ໄດ້ຊົງບອກໄວ້. 3ອັບຣາຮາມ ໃສ່ຊື່ລູກຊາຍວ່າ ອີຊາກ. 4ເມື່ອ ອີຊາກ ອາຍຸໄດ້ແປດມື້
ອັບຣາຮາມ ກໍເຮັດພິທີຕັດ ໃຫ້ຕາມທີ່ ພຣະເຈົ້າ ໄດ້ຊົງສັ່ງ ເພິ່ນໄວ້. 5ເມື່ອ ອີຊາກ ເກີດມາ ອັບຣາ-
ຮາມ ອາຍຸໄດ້ຮ້ອຍປີ

6ແລ້ວນາງ ຊາຣາ ເວົ້າວ່າ, “ພຣະເຈົ້າ ຊົງປະທານຄວາມຊົມຊື່ນຍິນດີ ແລະສຽງຫົວໃຫ້ແກ່
ຂ້ອຍ ທຸກຄົນທີ່ໄດ້ຍິນເລື່ອງນີ້ກໍຈະຫົວໄປນຳຂ້ອຍ.” 7ນາງເວົ້າຕື່ມອີກວ່າ, “ໃຜຈະເວົ້າກັບ ອັບ-
ຣາຮາມ ໄດ້ວ່າ ຊາຣາ ຍັງຈະມີລູກ? ເຖິງຢ່າງໃດກໍດີ ຂ້ອຍໄດ້ລູກຊາຍຜູ້ໜຶ່ງໃຫ້ເພິ່ນເມື່ອເພິ່ນ
ເຖົ້າແກ່ແລ້ວ.”

8ເດັກນ້ອຍນັ້ນກໍຈະເລີນເຕີບໃຫຍ່ຂຶ້ນ ແລະໃນມື້ທີ່ ອີຊາກຢ່ານົມ ອັບຣາຮາມ ໄດ້ຈັດງານກິນ
ລ້ຽງຢ່າງໃຫຍ່ໂຕ.

## ອັບຣາຮາມສົ່ງຮາກາ ແລະອິດຊະມາເອນໃຫ້ໜີໄປ

9ມື້ໜຶ່ງ ອິດຊະມາເອນ ລູກຊາຍຂອງນາງ ຮາກາ ຊາວ ເອຢິບ ກຳລັງຫລິ້ນຢູ່ກັບ ອີຊາກ ລູກຊາຍ
ຂອງນາງ ຊາຣາ. 10ເມື່ອນາງ ຊາຣາ ເຫັນເຊັ່ນນັ້ນ ຈຶ່ງເວົ້າກັບ ອັບຣາຮາມ ວ່າ, “ຈົ່ງສົ່ງທາດຍິງຜູ້
ນີ້ ແລະລູກຊາຍຂອງນາງໜີໄປສາ ເພາະວ່າບໍ່ສົມຄວນໃຫ້ລູກຊາຍຂອງມັນໄດ້ຮັບສ່ວນໜຶ່ງ
ສ່ວນໃດໃນກອງມໍລະດົກຂອງເຈົ້າເລີຍ ແມ່ນ ອີຊາກ ລູກຊາຍຂອງຂ້ອຍເທົ່ານັ້ນທີ່ຈະໄດ້ຮັບແຕ່
ຜູ້ດຽວ.

11“ເລື່ອງນີ້ສ້າງຄວາມໜັກໃຈໃຫ້ແກ່ອັບຣາຮາມ ເປັນຢ່າງຍິ່ງ ເພາະ ອິດຊະມາເອນ ກໍເປັນລູກ
ຂອງ ເພິ່ນຄືກັນ. 12ແຕ່ ພຣະເຈົ້າ ຊົງກ່າວກັບ ອັບຣາຮາມ ວ່າ ຢ່າສູ່ອຸກໃຈ ໃນ ເລື່ອງ ເດັກນ້ອຍ
ແລະທາດຍິງ ຮາກາ ນັ້ນເລີຍ ຈົ່ງເຮັດຕາມທີ່ ຊາຣາ ບອກເຈົ້າ ເພາະວ່າຍ້ອນ ອີຊາກ ເຈົ້າຈະມີ
ເຊື້ອສາຍຢ່າງຫລວງຫລາຍຕາມທີ່ ເຮົາໄດ້ສັນຍາໄວ້. 13ເຮົາຈະໃຫ້ລູກຂອງທາດຍິງນັ້ນ ມີລູກ
ຫລານຢ່າງຫລວງຫລາຍຄືກັນ ເພື່ອພວກເຂົາຈະໄດ້ກາຍເປັນອີກປະເທດໜຶ່ງ ເພາະລາວກໍເປັນ
ລູກຂອງເຈົ້າຄືກັນ.”

14ມື້ຕໍ່ມາຕັ້ງແຕ່ເຊົ້າມືດ ອັບຣາຮາມ ເອົາອາຫານແລະ ນ້ຳເຕົ້າໜ່ວຍໜຶ່ງໃຫ້ນາງ ຮາກາ ເອົາ
ເດັກນ້ອຍເຈ່ຍໃສ່ຫລັງຂອງນາງ ແລ້ວສົ່ງນາງອອກໜີໄປ ນາງຈຶ່ງຊັດເຊພະເນຈອນໄປໃນຖິ່ນ
ກັນດານ ເບເອ-ເຊບາ. 15ເມື່ອນ້ຳ ໃນ ເຕົ້ານັ້ນໝົດ ນາງ ຈຶ່ງປະລູກ ໄວ້ຢູ່ກ້ອງພຸ່ມໄມ້ແຫ່ງໜຶ່ງ.
16ແລ້ວໜີໄປນັ່ງຢູ່ຫ່າງຈາກເດັກນ້ອຍປະມານຮ້ອຍຫລາ. ນາງເວົ້າຢູ່ຜູ້ດຽວວ່າ, “ຂ້ອຍບໍ່ກ້າເບິ່ງ
ລູກຂ້ອຍຕາຍ” ເມື່ອນາງນັ່ງລົງບ່ອນນັ້ນ ເດັກກໍເລີ່ມຮ້ອງໄຫ້ຂຶ້ນ.

17ພຣະເຈົ້າ ຊົງໄດ້ຍິນສຽງເດັກນ້ອຍຮ້ອງໄຫ້ ແລະທູດຂອງພຣະອົງໄດ້ເອີ້ນນາງ ຮາກາ ຈາກ
ສະຫວັນຊັ້ນຟ້າວ່າ "ຮາກາ ເຈົ້າມີຄວາມອຸກອັ່ງຫຍັງ? ຢ່າສູ່ຢ້ານເລີຍ ພຣະເຈົ້າ ໄດ້ຍິນສຽງ
ເດັກນ້ອຍໄຫ້ແລ້ວ. 18ຈົ່ງລຸກໄປອູ້ມແລະອອຍລາວສາ ເຮົາຈະໃຫ້ເຊື້ອສາຍຂອງລາວມີຢ່າງ
ຫລວງຫລາຍ ຈົນ ເກີດ ເປັນປະເທດ ໃຫຍ່. 19ຄັນ ແລ້ວ ພຣະເຈົ້າ ຊົງ ເຮັດ ໃຫ້ນາງ ເຫັນສ້າງໜ່ອຍ
ໜຶ່ງ ນາງຈຶ່ງຟ້າວໄປຕັກເອົານ້ຳຈົນເຕັມເຕົ້າແລ້ວເອົາໄປໃຫ້ລູກຊາຍກິນ.

20ພຣະເຈົ້າ ຊົງສະຖິດຢູ່ກັບເດັກນ້ອຍນັ້ນຈົນລາວຈະເລີນເຕີບໃຫຍ່ຂຶ້ນ ລາວໄດ້ອາໄສຢູ່ໃນ
ປ່າກັນດານ ປາຣານ ໄດ້ກາຍເປັນນາຍພານທີ່ສະຫລາດແລະຊຳນານ. 21ແມ່ໄດ້ຫາເມຍຈາກ
ປະເທດ ເອຢິບ ມາໃຫ້ລາວ.

## ຂໍ້ຕົກລົງລະຫວ່າງອັບຣາຮາມແລະກະສັດອາບີເມເລັກ

22ໃນຄາວນັ້ນ ກະສັດ ອາບີເມເລັກ ໄດ້ສະເດັດໄປຫາ ອັບຣາຮາມ ກັບ ຟີໂກນ ນາຍທະຫານ
ຂອງພະອົງ ແລ້ວເວົ້າວ່າ, "ພຣະເຈົ້າ ໄດ້ສະຖິດຢູ່ກັບເຈົ້າໃນການກະທຳທຸກສິ່ງທຸກຢ່າງ. 23ສະ-
ນັ້ນ ຈົ່ງປະຕິຍານໃນທີ່ນີ້ຕໍ່ພຣະພັກ ພຣະເຈົ້າ ວ່າ", "ເຈົ້າຈະບໍ່ຫລອກລວງເຮົາ ລູກຫລານ ຫລື
ເຊື້ອສາຍຂອງເຮົາໆ ມີຄວາມສັດຊື່ຕໍ່ເຈົ້າ ດັ່ງນັ້ນຈົ່ງສັນຍາແກ່ເຮົາວ່າ ເຈົ້າຈະສັດຊື່ຕໍ່ເຮົາຄືກັນ
ແລະຕໍ່ແຜ່ນດິນທີ່ເຈົ້າອາໄສຢູ່ນີ້."

24ອັບຣາຮາມ ກໍທູນຕອບວ່າ, "ຂ້ານ້ອຍຂໍປະຕິຍານ." 25ອັບຣາຮາມ ຮ້ອງຂໍຕໍ່ກະສັດ ອາບີເມ-
ເລັກ ກ່ຽວເລື່ອງນ້ຳສ້າງທີ່ຂ້າລາຊະການຂອງພະອົງໄດ້ຍຶດເອົາ. 26ກະສັດ ອາບີເມເລັກ ຈຶ່ງ
ກ່າວວ່າ, "ເຮົາບໍ່ຮູ້ເລື່ອງນີ້ເຈົ້າບໍ່ບອກເຮົາ ແລະແມ່ນເທື່ອທຳອິດທີ່ເຮົາໄດ້ຍິນເລື່ອງນີ້."

27ຄັນແລ້ວ ອັບຣາຮາມ ກໍເອົາແກະ ແລະງົວບາງຕົວຖວາຍ ແກ່ ອາບີເມເລັກ. 28ອັບຣາຮາມ
ແຍກເອົາແກະເຈັດໂຕອອກມາຈາກຝູງ. 29ກະສັດ ອາບີເມເລັກ ຈຶ່ງຖາມເພິ່ນວ່າ "ເຈົ້າແຍກແກະ
ເຈັດໂຕອອກມາເຮັດຫຍັງ?" 30ອັບຣາຮາມ ທູນຕອບວ່າ ພະອົງຈົ່ງຮັບລູກແກະເຈັດໂຕນີ້ໄປສາ
ດ້ວຍການກະທຳເຊັ່ນນີ້ ພະອົງຈະຊົງຮັບຮູ້ວ່າຂ້ານ້ອຍໄດ້ຂຸດນ້ຳສ້າງນີ້. 31ດັ່ງນັ້ນບ່ອນນີ້ຈຶ່ງ
ເອີ້ນວ່າ ເບເອ-ເຊບາ ເພາະວ່າເປັນບ່ອນທີ່ທັງສອງໄດ້ປະຕິຍານຕໍ່ກັນ.

32ຫລັງຈາກທັງສອງ ໄດ້ຕັ້ງຂໍ້ຕົກລົງທີ່ ເບເອ-ເຊບາ ແລ້ວ ກະສັດ ອາບີເມເລັກ ແລະ ຟີໂກນ
ນາຍທະຫານຂອງພຣະອົງກໍພາກັນກັບຄືນສູ່ດິນແດນພວກ ຟີລິດສະຕິນ. 33ຄັນແລ້ວ ອັບຣາ-
ຮາມ ໄດ້ປູກຕົ້ນໄມ້ໃສ່ທີ່ ເບເອ-ເຊບາ ແລະໄດ້ນະມັດສະການ ພຣະຜູ້ເປັນເຈົ້າ ອົງຕັ້ງຢູ່ເປັນນິດ.
34ອັບຣາຮາມ ໄດ້ອາໄສຢູ່ໃນປະເທດ ຟີລິດສະຕິນ ເປັນເວລາຫລາຍມື້.

# ບົດທີ 22

## ພຣະຜູ້ເປັນເຈົ້າ ຊົງສັ່ງໃຫ້ອັບຣາຮາມຖວາຍອີຊາກ

1ຄັນຕໍ່ມາ ພຣະເຈົ້າ ຊົງລອງໃຈ ອັບຣາຮາມ ພຣະອົງຊົງກ່າວ ແກ່ ເພິ່ນວ່າ, "ອັບຣາຮາມ
ເອີຍ" ເພິ່ນຈຶ່ງທູນຕອບວ່າ, "ໂດຍຂ້ານ້ອຍ." 2ແລ້ວພຣະອົງຊົງກ່າວວ່າ, "ຈົ່ງເອົາ ອີຊາກ ລູກ
ຊາຍສຸດທີ່ຮັກຄົນດຽວຂອງເຈົ້າໄປຍັງແຄວ້ນ ໂມຣີຢາ ໃນທີ່ນັ້ນຈົ່ງເຜົາລາວຖວາຍເປັນເຄື່ອງບູ-
ຊາແກ່ເຮົາຢູ່ເທິງພູແຫ່ງໜຶ່ງ ທີ່ເຮົາຈະບອກແກ່ເຈົ້າ."

3ອັບຣາຮາມ ຈຶ່ງລຸກຂຶ້ນແຕ່ເຊົ້າມືດ ເອົາອານໃສ່ເທິງຫລັງລໍແລ້ວເອົາອີຊາກ ກັບຄົນໃຊ້ສອງ
ຄົນໄປນຳຕົນ ພ້ອມນີ້ເພິ່ນໄດ້ຕຽມເອົາຟືນເພື່ອເຜົາເຄື່ອງບູຊາ ແລ້ວພາກັນອອກເດີນທາງມຸ້ງ
ໜ້າໄປສູ່ບ່ອນທີ່ພຣະເຈົ້າຊົງບອກໄວ້.
4ເມື່ອເດີນທາງມາໄດ້ສາມມື້ ອັບຣາຮາມ ກໍແລເຫັນບ່ອນທີ່ພຣະເຈົ້າຊົງບອກນັ້ນແຕ່ໄກ.
5ດັ່ງນັ້ນ ເພິ່ນຈຶ່ງເວົ້າກັບຄົນໃຊ້ວ່າ, "ພວກເຈົ້າກັບລໍຈົ່ງຖ້າຂ້ອຍຢູ່ນີ້ ຂ້ອຍກັບລູກຈະພາກັນຂຶ້ນ
ໄປນະມັດສະການພຣະເຈົ້າຢູ່ເທິງພູພຸ້ນ ແລ້ວຈະກັບມາຫາ."
6ອັບຣາຮາມ ເອົາຟືນໃຫ້ອີຊາກແບກໄປ ສ່ວນເພິ່ນເອງກໍຖືເອົາໄຟ ແລະມີດ ແລ້ວທັງສອງພໍ່
ລູກກໍພາກັນມຸ້ງໜ້າໄປທີ່ນັ້ນ. 7ເມື່ອກຳລັງເດີນທາງໄປນັ້ນ ອີຊາກຈຶ່ງເວົ້າຕໍ່ອັບຣາຮາມວ່າ, "ພໍ່
ເອີຍ" ພໍ່ຈຶ່ງຕອບວ່າ, "ແມ່ນຫຍັງລູກ" ອີຊາກຈຶ່ງຖາມຕໍ່ໄປວ່າ, "ຟືນ ແລະໄຟກໍມີແລ້ວແຕ່ລູກ
ແກະທີ່ຈະເຜົາຖວາຍບູຊານັ້ນຢູ່ໃສ?". 8ອັບຣາຮາມຕອບວ່າ, "ລູກເອີຍ ພຣະເຈົ້າຈະຊົງຈັດຫາ
ໃຫ້ເອງ" ສອງພໍ່ລູກກໍພາກັນເດີນທາງຕໍ່ໄປ.
9ເມື່ອເຂົາໄປຮອດບ່ອນທີ່ພຣະຜູ້ເປັນເຈົ້າໄດ້ຊົງບອກໄວ້ແລ້ວ ອັບຣາຮາມຈຶ່ງສ້າງແທ່ນບູ-
ຊາຂຶ້ນ ຈັດເອົາຟືນວາງໄວ້ເທິງແທ່ນນັ້ນ ແລ້ວມັດລູກຊາຍຂອງຕົນວາງໄວ້ເທິງກອງຟືນທີ່ແທ່ນ
ບູຊາ. 10ແລ້ວເພິ່ນຈຶ່ງຈັບມີດຕຽມຈະຂ້າລູກຊາຍ. 11ແຕ່ທັນໃດນັ້ນ ທູດຂອງພຣະຜູ້ເປັນເຈົ້າ
ເອີ້ນມາແຕ່ສະຫວັນຊັ້ນຟ້າວ່າ, "ອັບຣາຮາມເອີຍ" ເພິ່ນຈຶ່ງທູນຕອບວ່າ, "ໂດຍຂ້ານ້ອຍ."
12ທູດຂອງພຣະເຈົ້າຈຶ່ງກ່າວຕໍ່ໄປວ່າ, "ຢ່າທຳຮ້າຍຫລືເຮັດຫຍັງແກ່ເດັກຊາຍຜູ້ນີ້ ບັດນີ້ເຮົາຮູ້
ແລ້ວວ່າ ເຈົ້າເຊື່ອຟັງແລະຢຳເກງພຣະເຈົ້າຢູ່ສະເໝີ ດ້ວຍວ່າເຈົ້າບໍ່ໄດ້ຫວງລູກຊາຍໂທນຂອງ
ເຈົ້າໄວ້ ແຕ່ໄດ້ຍອມຖວາຍລາວໃຫ້ແກ່ເຮົາ."
13ອັບຣາຮາມ ແນມໄປຮອບໆຕົວເຫັນແກະເຖິກໂຕໜຶ່ງຊຶ່ງເຂົາຂອງມັນຄາຢູ່ພຸ່ມໄມ້ ເພິ່ນຈຶ່ງ
ໄປອູ້ມເອົາມັນມາຂ້າຖວາຍແກ່ພຣະຜູ້ເປັນເຈົ້າແທນລູກຊາຍ. 14ອັບຣາຮາມ ໃສ່ຊື່ບ່ອນນັ້ນວ່າ,
"ພຣະຜູ້ເປັນເຈົ້າຊົງຈັດໃຫ້" ແລະຈົນເຖິງທຸກວັນນີ້ຊາວເມືອງກໍຍັງເວົ້າຕໍ່ໆກັນມາວ່າ, "ເທິງພູ-
ເຂົາຂອງພຣະຜູ້ເປັນເຈົ້າຊົງຈັດໃຫ້."
15ທູດຂອງພຣະຜູ້ເປັນເຈົ້າເອີ້ນອັບຣາຮາມມາແຕ່ສະຫວັນຊັ້ນຟ້າເທື່ອທີສອງວ່າ, 16"ເຮົາຂໍ
ສາບານດ້ວຍອຳນາດ ແລະຊື່ສຽງຂອງເຮົາວ່າ ເຮົາຈະອວຍພອນໃຫ້ເຈົ້າຢ່າງມະຫາສານ ກໍ
ເພາະວ່າເຈົ້າໄດ້ເຮັດຕາມທີ່ເຮົາບອກ ແລະບໍ່ໄດ້ຫວງລູກຊາຍໂທນຂອງເຈົ້າໄວ້. 17ເຮົາຂໍສັນຍາ
ວ່າຈະປະທານເຊື້ອສາຍໃຫ້ເຈົ້າຢ່າງຫລວງຫລາຍ ເໝືອນດວງດາວໃນທ້ອງຟ້າ ຫລື ເໝືອນ
ເມັດດິນຊາຍໃນແຄມທະເລ ເຊື້ອສາຍຂອງເຈົ້າຈະຜາບແພ້ສັດຕູທັງຫລາຍ. 18ຊົນຊາດທັງປວງ
ທົ່ວໂລກ ຈະຮ້ອງຂໍໃຫ້ເຮົາອວຍພອນເຂົາເໝືອນດັ່ງທີ່ເຮົາໄດ້ອວຍພອນໃຫ້ເຊື້ອສາຍຂອງເຈົ້າ
ເຮົາຈະເຮັດສິ່ງນີ້ກໍຍ້ອນເຈົ້າໄດ້ຟັງຄຳສັ່ງຂອງເຮົາ."
19ອັບຣາຮາມ ໄດ້ຫລົບຄືນມາຫາຄົນໃຊ້ທັງສອງ ແລ້ວພາກັນຄືນເມືອສູ່ເມືອງເບເອ-ເຊບາ
ບ່ອນທີ່ຕົນອາໄສຢູ່.

## ເຊື້ອສາຍຂອງນາໂຮ

20ດັ່ງນັ້ນ ອັບຣາຮາມໄດ້ຊາບວ່ານາງມີລະກາເມຍຂອງນາໂຮຜູ້ຊຶ່ງເປັນນ້ອງຊາຍຂອງຕົນ

ມີລູກຫລາຍຄົນ. 21ຄື ອູເຊອ້າຍກົກ ບູເຊນ້ອງຊາຍ ເກມູເອນພໍ່ຂອງອາຣາມ 22ເກເຊັດ ຮາ-
ໂຊ ປີນດາດ ຢິດລາບ ແລະ ເບທູເອນ (ເບທູເອນ ເປັນພໍ່ຂອງນາງ ເຣເບກາ). 23ມີລະກາ ໄດ້
ເກີດລູກຊາຍແປດຄົນນີ້ໃຫ້ແກ່ ນາໂຮ ນ້ອງຊາຍຂອງອັບຣາຮາມ. 24ເມຍຜູ້ທີສອງຂອງ ນາໂຮ
ຄື ນາງ ເຣອູມາ ມີລູກສີ່ຄົນຄື ເຕບາ ກາຮາມ ຕາຮາດ ແລະ ມາອາກາ.

# ບົດທີ 23

## ນາງຊາຣາເຖິງແກ່ກຳ ແລະອັບຣາຮາມຊື້ບ່ອນຝັງສົບ

1-2ນາງ ຊາຣາ ໄດ້ເຖິງ ແກ່ກຳທີ່ ກີຣິອາດ-ອາຣະບາ (ຫລື ເຮັບໂຣນ) ຢູ່ໃນປະເທດ ການາ-
ອານ ເມື່ອອາຍຸໄດ້ຮ້ອຍຊາວເຈັດປີ ອັບຣາຮາມ ໄດ້ຕົບແຕ່ງສົບເມຍ ແລະໄວ້ທຸກໃຫ້ນາງ.

3-4ຕໍ່ມາ ອັບຣາຮາມ ກໍປະສົບເມຍໄວ້ ແລະໄປເວົ້າກັບຊາວ ຮິດຕີ ວ່າ, "ຂ້ອຍອາໄສຢູ່ບ່ອນນີ້
ໃນນາມຄົນຕ່າງດ້າວເທົ່ານັ້ນ ຈົ່ງຂາຍດິນບາງຕອນໃຫ້ຂ້ອຍຝັງສົບເມຍຂ້ອຍແດ່."

5-6ພວກເຂົາຕອບວ່າ, "ອາດຍາເອີຍ ຂໍຟັງພວກຂ້ານ້ອຍກ່ອນ ອາດຍາເປັນເຈົ້ານາຍຜູ້ມີອຳ-
ນາດ ໃນທ່າມກາງພວກຂ້ານ້ອຍ ຈົ່ງຝັງ ເມຍຂອງອາດຍາໃນຫລຸມຝັງສົບຂອງພວກຂ້ານ້ອຍ
ຕາມທີ່ອາດຍາເຫັນຊອບສາ ບໍ່ມີໃຜໃນພວກເຮົາຈະປະຕິເສດ ແລະຂັດຂວາງທ່ານບໍ່ໃຫ້ຝັງເມຍ
ໃສ່ຫລຸມຝັງສົບທີ່ພວກເຮົາມີ."

7ດັ່ງນັ້ນ ແລ້ວ ອັບຣາຮາມ ກໍຢືນຂຶ້ນແລ້ວກົ້ມຄຳນັບພວກເຂົາ ແລະເວົ້າວ່າ, 8"ຖ້າພວກເຈົ້າຍິນດີ
ໃຫ້ຂ້ອຍຝັງ ເມຍຂ້ອຍຢູ່ໃນທີ່ນີ້ຈົ່ງກະລຸນາໄປນຳ ເອຟະໂຣນ ຊາວ ຮິດຕີ ຜູ້ເປັນລູກຊາຍຂອງ ໂຊ-
ຮາ. 9ໃຫ້ລາວຂາຍຖ້ຳ ມັກເປລາ ທີ່ ແຄມນາຂອງລາວໃຫ້ຂ້ອຍຕາມລາຄາທີ່ວາງ ໄວ້ ແລ້ວໃນ
ທ່າມກາງພວກເຈົ້າທີ່ນີ້ ເພື່ອວ່າຂ້ອຍຈະມີຖ້ຳຝັງສົບໄວ້ເປັນຂອງຕົນເອງ."

10ໃນເວລານັ້ນ ເອຟະໂຣນ ກໍນັ່ງກັບຊາວຮິດຕີທີ່ບ່ອນປະຊຸມໃນປະຕູເຂົ້າເມືອງ. ເພິ່ນຕອບ
ອັບຣາຮາມ ໃຫ້ທຸກຄົນໃນທີ່ນັ້ນໄດ້ຍິນວ່າ, 11"ອາດຍາເອີຍ ບໍ່ແມ່ນຈັ່ງຊັ້ນດອກຈົ່ງຟັງຂ້ານ້ອຍ
ກ່ອນຂ້ານ້ອຍຈະໃຫ້ດິນນາທັງໝົດພ້ອມທັງຖ້ຳທີ່ຢູ່ໃນນານັ້ນໃຫ້ແກ່ທ່ານ ຂ້ານ້ອຍເວົ້າຢູ່ທີ່ນີ້ຕໍ່-
ໜ້າປະຊາຊົນຂອງຂ້ານ້ອຍ ຂ້ານ້ອຍຈະໃຫ້ຖ້ຳນັ້ນແກ່ທ່ານເພື່ອທ່ານຈະໄດ້ຝັງສົບເມຍ."

12-13ແຕ່ ອັບຣາຮາມ ກໍກົ້ມຄຳນັບຊາວ ເມືອງນັ້ນ ແລະ ເວົ້າກັບ ເອຟະໂຣນ ຊ້ອງໜ້າຊາວ
ເມືອງນັ້ນວ່າ, "ຖ້າເຈົ້າຍິນຍອມ ກະລຸນາຟັງຂ້ອຍກ່ອນ ຂ້ອຍຂໍຊື້ນາທັງໝົດ ຈົ່ງຍອມຮັບເງິນ
ຄ່ານາ ແລະຂ້ອຍກໍຈະຝັງສົບເມຍຂ້ອຍຢູ່ທີ່ນັ້ນ."

14-15ເອຟະໂຣນ ຕອບວ່າ, "ທ່ານເອີຍ ນາຕອນນັ້ນມີລາຄາເຖິງສີ່ຮ້ອຍຫລຽນ ແຕ່ສຳລັບຂ້າ-
ນ້ອຍກັບທ່ານແລ້ວກໍບໍ່ເປັນຫຍັງດອກ ຈົ່ງຝັງສົບເມຍຂອງທ່ານສາ."

16ອັບຣາຮາມ ໄດ້ຕົກລົງຊື້ດິນນັ້ນ ຈາກ ເອຟະໂຣນ ຕໍ່ໜ້າຊາວ ຮິດຕີ ເປັນ ເງິນ ຈຳນວນສີ່ຮ້ອຍ
ຫລຽນຕາມອັດຕາທີ່ເຄີຍໃຊ້ກັນໃນເວລານັ້ນ.

17ດິນຂອງ ເອຟະໂຣນ ທີ່ ມັກເປລາ ທາງທິດຕາເວັນອອກຂອງ ມາມເຣ ຮ່ວມທັງນາ ແລະຖ້ຳ.
18ພ້ອມທັງຕົ້ນໄມ້ທຸກໆ ຕົ້ນທີ່ຢູ່ໃນເຂດແດນນັ້ນ ເອຟະໂຣນກໍໂອນໃຫ້ອັບຣາຮາມ ຕໍ່ໜ້າຊາວ
ຮິດຕີ ຄືຄົນທີ່ມາປະຊຸມຢູ່ທາງປະຕູເຂົ້າເມືອງນັ້ນ.

19ຕໍ່ມາ  ອັບຣາຮາມ ຈຶ່ງໄດ້ຝັງສົບນາງຊາຣາ ເມຍຂອງຕົນໄວ້ໃນຖ້ຳທີ່ມາ ມັກເປລາ ໃນປະ-
ເທດການາອານ. 20ສະນັ້ນ ນາ ແລະຖ້ຳຢູ່ໃນທີ່ນັ້ນ ຊຶ່ງເຄີຍເປັນຂອງຊາວຮິດຕີກໍເລີຍເປັນສົມ
ບັດຂອງອັບຣາຮາມ ເພື່ອໃຊ້ໃຫ້ເປັນບ່ອນຝັງສົບ.

# ບົດທີ 24

## ເມຍຂອງອີຊາກ

1ຢູ່ຕໍ່ມາ ອັບຣາຮາມກໍເຖົ້າແກ່ຫລາຍແລ້ວ ແລະພຣະຜູ້ເປັນເຈົ້າໄດ້ອວຍພອນໃຫ້ທຸກສິ່ງທຸກ
ຢ່າງທີ່ໄດ້ເຮັດມານັ້ນຈະເລີນຂຶ້ນ. 2-3ອັບຣາຮາມ ເວົ້າກັບຄົນໃຊ້ຜູ້ອາວຸໂສຊຶ່ງຮັບຜິດຊອບໃນ
ຊັບສົມບັດວ່າ, “ຈົ່ງວາງມືລົງຫວ່າງກົກຂາຂ້ອຍ ແລ້ວສາບານຕໍ່ພຣະພັກຂອງພຣະຜູ້ເປັນເຈົ້າ
ແຫ່ງສະຫວັນແລະແຜ່ນດິນໂລກວ່າເຈົ້າຈະບໍ່ເອົາຜູ້ສາວໃນປະເທດການາອານບ່ອນທີ່ຂ້ອຍອາ-
ໄສຢູ່ທີ່ນີ້ມາເປັນເມຍຂອງລູກຊາຍຂ້ອຍ. 4ແຕ່ວ່າເຈົ້າຈົ່ງກັບເມືອປະເທດຂອງຂ້ອຍ ແລ້ວຊອກ
ຫາເອົາຜູ້ສາວໃນທ່າມກາງພວກຍາດພີ່ນ້ອງມາເປັນເມຍຂອງອີຊາກ.”
5ຄົນໃຊ້ຈຶ່ງຖາມວ່າ, “ຈະເຮັດແນວໃດ ເມື່ອຍິງສາວຜູ້ທີ່ຈະເປັນລູກໃພ້ນັ້ນບໍ່ຍອມຈາກບ້ານ
ມາຢູ່ນຳເຮົາໃນປະເທດນີ້ ຈະໃຫ້ຂ້ານ້ອຍເອົາລູກຊາຍຂອງທ່ານໄປສູ່ນາງຫລື?”
6ອັບຣາຮາມຈຶ່ງຕອບວ່າ, “ບໍ່ ເຈົ້າຈົ່ງລະວັງຢ່າພາລູກຊາຍຂ້ອຍກັບໄປປະເທດຂອງຂ້ອຍ
ອີກ. 7ເຫດວ່າ ພຣະຜູ້ເປັນເຈົ້າເທິງສະຫວັນໄດ້ພາຂ້ອຍໜີອອກຈາກເຮືອນບິດາ ແລະຈາກ
ບ້ານເກີດເມືອງນອນ ມາຍັງດິນດອນຕອນນີ້ທີ່ພຣະອົງຈະຊົງປະທານໃຫ້ເຊື້ອສາຍຂອງຂ້ອຍ
ຕາມພຣະສັນຍາ ພຣະອົງຈະໃຊ້ທູດຂອງພຣະອົງໄປກ່ອນເຈົ້າເພື່ອເຈົ້າຈະຫາເມຍຢູ່ທີ່ນັ້ນໃຫ້ແກ່
ລູກຊາຍຂອງຂ້ອຍໄດ້. 8ແຕ່ວ່າ ຖ້າຫາກຍິງນັ້ນບໍ່ຍອມມານຳເຈົ້າ ເຈົ້າຈະຫວິດຈາກຄຳສາບານ
ເຖິງຢ່າງໃດເຈົ້າກໍຢ່າພາລູກຊາຍຂອງຂ້ອຍກັບໄປທີ່ນັ້ນເດັດຂາດ. 9ດັ່ງນັ້ນ ຄົນໃຊ້ຈຶ່ງວາງມືລົງ
ວ່າງກົກຂາຂອງອັບຣາຮາມ ແລະສາບານວ່າຈະເຮັດທຸກສິ່ງຕາມທີ່ນາຍຂໍຮ້ອງ.
10ຄັນແລ້ວ ຄົນໃຊ້ຈຶ່ງເອົາອູດສິບໂຕຂອງນາຍພ້ອມທັງຂອງຂວັນທີ່ມີຄ່າຫລາຍຢ່າງ ອອກ
ເດີນທາງມຸ່ງໜ້າໄປສູ່ເມືອງຂອງນາໂຮ ຢູ່ໃນປະເທດເມໂຊໂປຕາເມຍ. 11ລາວມາຮອດເມືອງນີ້
ເວລາແລງ ພໍດີແມ່ນຍາມທີ່ຍິງສາວຊາວເມືອງລົງມາຕັກນ້ຳ ເມື່ອມາຮອດນ້ຳສ້າງທີ່ຢູ່ນອກ
ເມືອງລາວຈຶ່ງໃຫ້ອູດຄຸເຂົ່າລົງ. 12ສ່ວນລາວເອງກໍອະທິຖານພຣະເຈົ້າວ່າ, “ໂອ ອົງພຣະຜູ້-
ເປັນເຈົ້າຂອງອັບຣາຮາມນາຍຂອງຂ້ານ້ອຍ ຂໍໂຜດປະທານຄວາມສຳເລັດໃນມື້ນີ້ໃຫ້ແກ່ຂ້າ-
ນ້ອຍ ແລະໂຜດສຳແດງຄວາມຮັກອັນໝັ້ນຄົງຂອງພຣະອົງຕໍ່ນາຍຂອງຂ້ານ້ອຍເທີ້ນ. 13ຂ້າ-
ນ້ອຍກຳລັງຢູ່ແຄມນ້ຳສ້າງບ່ອນທີ່ບັນດາຍິງສາວຊາວເມືອງກຳລັງອອກມາຕັກນ້ຳ. 14ຖ້າຂ້າ-
ນ້ອຍເວົ້າຕໍ່ຍິງສາວຜູ້ໃດຜູ້ໜຶ່ງວ່າ, “ຂ້ອຍຂໍກິນນ້ຳໃນໄຫຂອງເຈົ້າແດ່” ແລ້ວຖ້ານາງຕອບວ່າ,
“ເຊີນກິນແມ ຂ້ອຍຈະເອົາໃຫ້ຝູງອູດເຈົ້າກິນດ້ວຍ” ຂໍໃຫ້ຍິງສາວຜູ້ນັ້ນເປັນຜູ້ຊຶ່ງພຣະອົງຊົງ
ເລືອກໃຫ້ເປັນເມຍອີຊາກຜູ້ຮັບໃຊ້ຂອງພຣະອົງ ດ້ວຍວິທີນີ້ ຂ້ານ້ອຍກໍຈະຮູ້ໄດ້ວ່າ ພຣະອົງຊົງ
ສະແດງຄວາມຮັກອັນໝັ້ນຄົງຕໍ່ນາຍຂອງຂ້ານ້ອຍ.”
15ກ່ອນລາວອະທິຖານແລ້ວນາງເຣເບກາ ລູກສາວເບທູເອນກໍແບກໄຫນ້ຳຍ່າງມາທີ່ນ້ຳສ້າງ

(ເບທູເອນ ເປັນລູກນາງ ມີລະກາ ແລະ ນາໂຮ ຜູ້ເປັນນ້ອງຊາຍຂອງ ອັບຣາຮາມ). [16]ນາງ ເປັນ
ສາວໂສດ ແລະງາມຫລາຍ ນາງລົງໄປທີ່ນໍ້າສ້າງແລ້ວຕັກນໍ້າຈົນເຕັມໄຫ. [17]ໃນຂະນະທີ່ກຳລັງ
ຈະກັບຄືນເມືອ ຄົນໃຊ້ຂອງ ອັບຣາຮາມ ຈຶ່ງຟ້າວແລ່ນໄປຫານາງແລ້ວເວົ້າວ່າ, "ຂ້ອຍຂໍກິນນໍ້າ
ໃນໄຫຂອງເຈົ້າແດ່." [18]ນາງຕອບວ່າ, "ເຊີນໂລດຍາລຸງ" ນາງຈຶ່ງປົງໄຫລົງຈາກບ່າແລ້ວເອົາ
ນໍ້າໃຫ້ລາວກິນ. [19]ຫລັງຈາກລາວອີ່ມແລ້ວນາງກໍເວົ້າວ່າ, "ຂ້ານ້ອຍກໍຈະຕັກນໍ້າໃຫ້ອູດຂອງຍາ
ລຸງກິນຈົນອີ່ມໝົດທຸກໂຕ." [20]ນາງຈຶ່ງຟ້າວຖອກນໍ້າໃນໄຫໃສ່ຮາງແລ້ວກໍແລ່ນໄປຕັກມາຖອກໃສ່
ອີກ ຈົນອູດທຸກໂຕກິນອີ່ມ. [21]ຊາຍຄົນນັ້ນກໍຢືນເບິ່ງນາງຢ່າງງຽບໆ ເພື່ອຈະໄດ້ຮູ້ວ່າ ພຣະເຈົ້າ
ປະທານຄວາມສຳເລັດໃຫ້ລາວແທ້ຫລືບໍ່.

[22]ເມື່ອນາງເອົານໍ້າໃຫ້ອູດກິນອີ່ມໝົດທຸກໂຕແລ້ວ ຄົນໃຊ້ຂອງ ອັບຣາຮາມ ກໍເອົາປອກຄຳ
ເຄິ່ງບາດ ເກາະໃສ່ດັງນາງ ແລະເອົາສາຍແຂນສິບບາດສອງເສັ້ນໃສ່ໃຫ້ນາງ. [23]ແລ້ວລາວຖາມ
ນາງຕື່ມອີກວ່າ, "ບອກຂ້ອຍແດ່ໄດ້ບໍ່ວ່າພໍ່ຂອງເຈົ້າແມ່ນໃຜ? ໃນເຮືອນຂອງພໍ່ເຈົ້າຍັງມີບ່ອນພັກ
ເຊົາສຳລັບຂ້ອຍ ແລະສັດຂອງຂ້ອຍບໍ?

[24]ນາງຕອບວ່າ, "ຂ້ານ້ອຍເປັນລູກສາວຂອງ ເບທູເອນ ຫລານສາວຂອງ ນາໂຮ ແລະນາງ ມີ-
ລະກາ. [25]ຢູ່ບ້ານຂ້ານ້ອຍມີເຟືອງ ແລະຫຍ້າສຳລັບສັດ ແລະມີບ່ອນພັກສຳລັບຍາລຸງດ້ວຍ."

[26]ເມື່ອໄດ້ຍິນນາງເວົ້າດັ່ງນັ້ນ ຄົນໃຊ້ຂອງ ອັບຣາຮາມ ຈຶ່ງຂາບລົງນະມັດສະການ ພຣະເຈົ້າ.
[27]ແລະເວົ້າວ່າ "ຂໍສັນລະເສີນອົງ ພຣະຜູ້ເປັນເຈົ້າ ຂອງ ອັບຣາຮາມ ພຣະອົງຊົງສະແດງຄວາມ
ຮັກອັນໝັ້ນຄົງແລະທ່ຽງທຳແທ້ ຕໍ່ນາຍຂອງຂ້ານ້ອຍ ແລະຍັງຊົງພາຂ້ານ້ອຍມາເຖິງບ້ານນ້ອງ
ຊາຍຂອງເພິ່ນ."

[28]ຍິງສາວຈຶ່ງແລ່ນໄປຫາແມ່ຢູ່ເຮືອນ ແລ້ວເລົ່າເລື່ອງທັງໝົດສູ່ຟັງ. [29-30]ເມື່ອ ລາບານ ອ້າຍ
ນາງ ເຣເບກາ ເຫັນປອກຄຳເກາະດັງ ແລະສາຍແຂນຄຳນຳນາງທັງໄດ້ຍິນເລື່ອງຂອງຊາຍຄົນ
ນັ້ນທີ່ມາເລົ່າສູ່ແມ່ຟັງ ກໍຟ້າວແລ່ນອອກໄປພົບຄົນໃຊ້ຂອງ ອັບຣາຮາມ ທີ່ຢືນລໍຢູ່ກັບຝູງອູດຂອງ
ລາວໃກ້ນໍ້າສ້າງ. [31]ແລ້ວເວົ້າຕໍ່ລາວວ່າ, "ທ່ານຜູ້ມີພຣະພອນຂອງ ພຣະເຈົ້າ ເຊີນເຂົ້າໄປໃນ
ເຮືອນເທາະ ເປັນຫຍັງທ່ານຈຶ່ງລໍຖ້າຢູ່ຂ້າງນອກ ຂ້ານ້ອຍໄດ້ຈັດບ່ອນສຳລັບທ່ານ ແລະສຳລັບ
ຝູງອູດຂອງທ່ານແລ້ວ."

[32]ເມື່ອໄດ້ຍິນເຊັ່ນນັ້ນຄົນໃຊ້ ອັບຣາຮາມ ກໍເຂົ້າໄປໃນເຮືອນ ສ່ວນ ລາບານ ກໍຂົນເຄື່ອງລົງ
ຈາກຫລັງອູດເອົາເຟືອງ ແລະຫຍ້າໃຫ້ອູດກິນແລ້ວເອົານໍ້າໃຫ້ຄົນໃຊ້ຂອງ ອັບຣາຮາມ ແລະຄົນທີ່
ມານຳລາວລ້າງຕີນ. [33]ເມື່ອເຈົ້າຂອງບ້ານຈັດໂຕະອາຫານຮຽບຮ້ອຍແລ້ວ ຄົນໃຊ້ຂອງ ອັບຣາ-
ຮາມ ຈຶ່ງເວົ້າວ່າ, "ຂ້ອຍຈະບໍ່ຮັບປະທານອາຫານຈົນກວ່າຂ້ອຍຈະເວົ້າເລື່ອງທີ່ຂ້ອຍຢາກເວົ້າ
ເສຍກ່ອນ" ລາບານ ຈຶ່ງຕອບວ່າ, "ເຊີນເວົ້າສາ."

[34-35]ລາວຈຶ່ງເວົ້າຂຶ້ນວ່າ, "ຂ້ອຍເປັນຄົນໃຊ້ຂອງ ອັບຣາຮາມ ອົງ ພຣະຜູ້ເປັນເຈົ້າ ໄດ້ຊົງໂຜດ
ປະທານໃຫ້ທ່ານມີຝູງແກະ ຝູງແບ້ ຝູງງົວ ຝູງລາ ແລະຝູງອູດ ມີເງິນມີຄຳ ແລະຂ້າໃຊ້ຊາຍ
ຍິງ. [36]ນາງ ຊາຣາ ເມຍຂອງນາຍຂ້ອຍໄດ້ມີລູກຊາຍຜູ້ໜຶ່ງເວລາເຖົ້າແລ້ວ ເພິ່ນໄດ້ມອບຊັບ
ສົມບັດທຸກສິ່ງທຸກຢ່າງໃຫ້ລາວ. [37]ເພິ່ນຍັງໄດ້ໃຫ້ຂ້ອຍສາບານວ່າຈະຍອມຟັງຄຳສັ່ງນີ້ ຄືບໍ່ໃຫ້

ຂ້ອຍເລືອກເອົາຍິງສາວຊາວການາອານ ໃນບ່ອນທີ່ເພິ່ນຢູ່ນັ້ນມາເປັນລູກໃພ້. [38]ເພິ່ນຈະສາບ
ແຊ່ງຖ້າຫາກຂ້ອຍບໍ່ມາຊອກຫາເອົາຍິງສາວຂອງຍາດພີ່ນ້ອງຂອງເພິ່ນທີ່ເມືອງນີ້ ໃຫ້ມາເປັນ
ເມຍຂອງລູກຊາຍເພິ່ນ. [39]ແລ້ວຂ້ອຍໄດ້ເວົ້າຕໍ່ນາຍວ່າ ຈະເຮັດແນວໃດຖ້າຫາກຍິງສາວຄົນນັ້ນ
ບໍ່ມານຳ. [40]ເພິ່ນໄດ້ຕອບວ່າ ອົງພຣະຜູ້ເປັນເຈົ້າຜູ້ຂ້ອຍເຊື່ອຟັງມາຕະຫລອດຈະສົ່ງທູດຂອງ
ພຣະອົງໄປກັບເຈົ້າ ແລະປະທານຄວາມສຳເລັດໃຫ້ ເຈົ້າຈະໄດ້ຍິງສາວຜູ້ໜຶ່ງຈາກຄອບຄົວ
ຍາດຕິພີ່ນ້ອງຂອງພໍ່ຂ້ອຍມາໃຫ້ອີຊາກ. [41]ຖ້າເຈົ້າເຮັດຕາມຂ້ອຍສັ່ງ ເຈົ້າກໍຈະຫວິດຈາກຄຳ
ສາບແຊ່ງ ແລະຖ້າເຈົ້າໄດ້ຮັບຄຳປະຕິເສດຈາກຍາດພີ່ນ້ອງຈາກຄອບຄົວຂ້ອຍ ເຈົ້າກໍຈະຫວິດ
ຈາກຄຳສາບແຊ່ງນີ້ເຊັ່ນດຽວກັນ. [42]ເມື່ອຂ້ອຍໄດ້ເດີນທາງມາຮອດນໍ້າສ້າງທີ່ນີ້ ຂ້ອຍໄດ້ອ້ອນ-
ວອນທູນຂໍນຳພຣະເຈົ້າວ່າ ຂ້າແດ່ອົງພຣະຜູ້ເປັນເຈົ້າຂອງອັບຣາຮາມ ຂໍຊົງໂຜດໃຫ້ສິ່ງທີ່ຂ້າ-
ນ້ອຍເຮັດນີ້ສຳເລັດເທີ້ນ. [43]ເວລານີ້ຂ້ານ້ອຍກຳລັງຢືນຢູ່ໃກ້ນໍ້າສ້າງ ຖ້າຍິງສາວຜູ້ໜຶ່ງອອກມາ
ຕັກນໍ້າ ແລະຂ້ານ້ອຍຈະເວົ້າກັບນາງວ່າ ຂໍດື່ມນໍ້າແດ່. [44]ຄັນນາງຕອບວ່າ ເຊີນດື່ມແມ ແລະ
ຂ້ອຍຈະເອົານໍ້າໃຫ້ອູດຂອງເຈົ້າກິນດ້ວຍ ຂໍໃຫ້ຜູ້ນີ້ເປັນຍິງສາວ ຜູ້ທີ່ພຣະຜູ້ເປັນເຈົ້າຊົງເລືອກ
ໃຫ້ເປັນເມຍລູກຊາຍນາຍຂອງຂ້ານ້ອຍແດ່ທ້ອນ.

[45]ກ່ອນຂ້ອຍອະທິຖານຈົບ ກໍພໍດີນາງເຣເບກາແບກໄຫລົງໄປຕັກນໍ້າ ຂ້ອຍຈຶ່ງເວົ້າຕໍ່ນາງວ່າ
ຂ້ອຍຂໍດື່ມນໍ້າແດ່. [46]ນາງຈຶ່ງຟ້າວເອົາໄຫລົງຈາກບ່າແລ້ວເວົ້າວ່າ ເຊີນດື່ມແມ ແລ້ວຂ້ານ້ອຍຈະ
ເອົານໍ້າໃຫ້ຝູງອູດທ່ານກິນດ້ວຍ ຂ້ອຍຈຶ່ງດື່ມ ແລ້ວນາງກໍຕັກນໍ້າໃຫ້ອູດກິນຄືກັນ. [47]ຂ້ອຍຈຶ່ງ
ຖາມນາງວ່າ ພໍ່ຂອງເຈົ້າແມ່ນໃຜ? ນາງຕອບວ່າ ພໍ່ຂອງຂ້ານ້ອຍແມ່ນເບທູເອນ ຂ້ານ້ອຍເປັນ
ຫລານສາວນາໂຮແລະນາງມິລະກາ ດັ່ງນັ້ນ ຂ້ອຍຈຶ່ງເອົາປອກຄຳເກາະໃສ່ດັງ ແລະເອົາສາຍ
ແຂນໃສ່ໃຫ້ນາງ. [48]ຄັນແລ້ວ ຂ້ອຍກໍຂາບລົງນະມັດສະການ ແລະສັນລະເສີນພຣະຜູ້ເປັນເຈົ້າ
ຂອງອັບຣາຮາມ ຜູ້ຊົງພາຂ້ອຍມາຖືກບ່ອນທີ່ຂ້ອຍພົບຫລານສາວຂອງນາຍຂ້ອຍ ຜູ້ທີ່ຈະເປັນ
ເມຍລູກຊາຍຂອງເພິ່ນ. [49]ບັດນີ້ຖ້າພວກເຈົ້າຍອມສະແດງຄວາມສັດຊື່ ແລະຄວາມຈິງໃຈຕໍ່ນາຍ
ຂ້ອຍ ກໍຂໍບອກໃຫ້ຂ້ອຍຮູ້ ຫລືຖ້າຫາກບໍ່ເປັນດັ່ງນັ້ນ ກໍຂໍບອກມາເພື່ອຂ້ອຍຈະໄດ້ຕັດສິນໃຈວ່າ
ຈະຄວນເຮັດແນວໃດ.”

[50]ເບທູເອນ ແລະ ລາບານ ຈຶ່ງຕອບວ່າ, “ດ້ວຍວ່າເລື່ອງນີ້ເປັນນໍ້າພຣະໄທຂອງພຣະຜູ້ເປັນ-
ເຈົ້າແລ້ວ ບໍ່ແມ່ນພວກເຮົາທີ່ຈະຕັດສິນໃຈແນວໃດແນວໜຶ່ງໄດ້. [51]ນາງເຣເບກາກໍຢູ່ນີ້ ຈົ່ງເອົາ
ນາງໄປເປັນເມຍຂອງລູກຊາຍນາຍເຈົ້າສາຕາມທີ່ພຣະອົງຊົງກ່າວໄວ້.”

[52]ເມື່ອຂ້າໃຊ້ອັບຣາຮາມໄດ້ຍິນເຊັ່ນນັ້ນ ລາວຈຶ່ງຂາບລົງນະມັດສະການພຣະຜູ້ເປັນເຈົ້າ.
[53]ແລ້ວລາວກໍເອົາເຄື່ອງເງິນຄຳ ເພັດພອຍ ແລະເສື້ອຜ້າອັນງາມໆໃຫ້ນາງເຣເບກາ ລາວຍັງ
ໄດ້ເອົາຂອງຂວັນລາຄາແພງໃຫ້ແມ່ ແລະອ້າຍຂອງນາງອີກດ້ວຍ. [54]ຄັນແລ້ວ ຄົນໃຊ້ຂອງ
ອັບຣາຮາມ ແລະຄົນທີ່ມາກັບລາວກໍຮັບປະທານອາຫານ ແລ້ວຄ້າງຄືນຢູ່ທີ່ນັ້ນ ຕອນເຊົ້າເມື່ອ
ພວກເຂົາຕື່ນຂຶ້ນ ຄົນໃຊ້ນັ້ນໄດ້ເວົ້າວ່າ, “ຈົ່ງໃຫ້ຂ້ອຍກັບເມືອຫານາຍຂອງຂ້ອຍສາ.” [55]ແຕ່ແມ່
ແລະອ້າຍຂອງເຣເບກາເວົ້າວ່າ, “ຂໍໃຫ້ນາງຢູ່ກັບພວກເຮົາກ່ອນຈັກອາທິດໜຶ່ງຫລືຈັກສິບມື້
ແລ້ວຈຶ່ງຄ່ອຍໄປບໍ່ໄດ້ບໍ?” [56]ແຕ່ລາວຕອບວ່າ, “ຢ່າຖ່ວງດຶງຂ້ອຍໄວ້ເລີຍ ອົງພຣະຜູ້ເປັນເຈົ້າ

ຊົງໃຫ້ການເດີນທາງຂອງຂ້ອຍບັງເກີດຜົນແລ້ວ ຈົ່ງໃຫ້ຂ້ອຍກັບເມືອຫານາຍຂ້ອຍສາ." 57ພວກ
ເຂົາຈຶ່ງຕອບວ່າ, "ຄັນຊັ້ນໃຫ້ເອີ້ນນາງມາຖາມເບິ່ງວ່າ ນາງຈະເວົ້າວ່າຈັ່ງໃດ." 58ພວກເຂົາຈຶ່ງ
ໄດ້ເອີ້ນນາງ ເຣເບກາ ມາຖາມວ່າ, "ເຈົ້າຈະໄປກັບເພິ່ນບໍ?" ນາງຈຶ່ງຕອບວ່າ, "ໂດຍ ຂ້ານ້ອຍ
ຈະໄປ."

59ດ້ວຍເຫດນີ້ພວກເຂົາຈຶ່ງມອບນາງ ເຣເບກາ ພ້ອມກັບ ແມ່ນົມຂອງນາງ ໃຫ້ໄປກັບຄົນໃຊ້
ຂອງ ອັບຣາຮາມ ແລະຄົນຂອງລາວ. 60ກ່ອນຈະຈາກໄປພວກເຂົາໄດ້ອວຍພອນໃຫ້ແກ່ນາງ ເຣ-
ເບກາ ມີຂໍ້ຄວາມດັ່ງນີ້: "ນ້ອງເອີຍ ຂໍໃຫ້ເຈົ້າເປັນແມ່ຂອງຄົນຫລາຍແສນ ຂໍໃຫ້ເຊື້ອສາຍຂອງ
ເຈົ້າ ຜາບແພ້ສັດຕູ."

61ຄັນແລ້ວ ນາງ ເຣເບກາ ແລະສາວໃຊ້ກໍຂຶ້ນຫລັງອູດອອກເດີນທາງໄປກັບຄົນໃຊ້ຂອງ ອັບ-
ຣາຮາມ.

62ຝ່າຍ ອີຊາກ ພວມຫາກໍກັບມາ ແຕ່ນໍ້າສ້າງທີ່ຊື່ວ່າ, "ນໍ້າສ້າງຂອງ ພຣະເຈົ້າ ຜູ້ຊົງ ເຫັນຂ້ອຍ"
ຢູ່ໃນ ແຄວັ້ນ ເນເກັບ. 63ໃນຕອນແລງລາວໄດ້ອອກໄປຍ່າງຫລິ້ນໃນທົ່ງນາ ເລີຍເຫັນຂະບວນ
ອູດກຳລັງມາ. 64ເມື່ອນາງ ເຣເບກາ ເຫັນ ອີຊາກ ນາງຈຶ່ງລົງຈາກຫລັງອູດ. 65ແລ້ວຖາມຄົນໃຊ້
ຂອງ ອັບຣາຮາມ ວ່າ, "ຜູ້ຊາຍທີ່ກຳລັງຍ່າງມານັ້ນແມ່ນໃຜ?" ລາວຈຶ່ງຕອບນາງວ່າ, "ແມ່ນນາຍ
ຂອງຂ້ອຍ." ເມື່ອໄດ້ຍິນດັ່ງນັ້ນນາງຈຶ່ງເອົາຜ້າອັດໜ້າໄວ

66ຄົນໃຊ້ຈຶ່ງໄດ້ເລົ່າທຸກສິ່ງທຸກຢ່າງທີ່ໄດ້ເຮັດມາສູ່ ອີຊາກ ຟັງ. 67ຄັນ ແລ້ວ ອີຊາກ ກໍພານາງ
ເຣເບກາ ເຂົ້າມາໃນເຕັນຂອງແມ່ ແລະຮັບເອົານາງເປັນເມຍ ອີຊາກກໍຮັກນາງ ເຣເບກາ ດັ່ງ-
ນັ້ນລາວຈຶ່ງມີຄວາມສະບາຍໃຈຂຶ້ນ ຫລັງຈາກໄດ້ສູນເສຍແມ່ສຸດທີ່ຮັກໄປແລ້ວ.

# ບົດທີ 25

## ເຊື້ອສາຍຂອງອັບຣາຮາມຈາກຍິງອື່ນ

1ອັບຣາຮາມ ໄດ້ແຕ່ງງານກັບຍິງອີກຜູ້ໜຶ່ງຊື່ວ່າ ເກຕຸຣາ. 2ນາງໄດ້ປະສູດລູກຊາຍຫລາຍຄົນ
ໃຫ້ເພິ່ນຄື ຊິມຣານ ໂຢກຊານ ເມດານ ມີດີອານ ອີຊະບາກ ແລະ ຊູອາ. 3ໂຢກຊານ ເປັນພໍ່
ຂອງ ເຊບາ ແລະ ເດດານ ລູກຊາຍທັງຫລາຍຂອງ ເດດານ ຄື ຊາວ ອັດຊີເຣຍ ຊາວ ເລຕູຊີມ
ແລະຊາວ ເລອຸມມີມ. 4ລູກຊາຍຂອງ ມີດີອານ ເອຟາ ເອເຟ ຮາໂນກ ອາບີດາ ແລະ ເອັນ-
ດາອາ ພວກເຂົາທັງໝົດນີ້ເປັນລູກຫລານຂອງນາງ ເກຕຸຣາ.

5-6ອັບຣາຮາມ ໄດ້ມອບມໍລະດົກທຸກສິ່ງໃຫ້ ອີຊາກ ກ່ອນ ເສຍຊີວິດ ເພິ່ນໄດ້ແບ່ງຊັບສິ່ງຂອງ
ບາງສ່ວນໃຫ້ລູກຊາຍທີ່ໄດ້ຈາກເມຍຜູ້ທີສອງທຸກໆຄົນ ແລ້ວໃຫ້ພວກເຂົາໜີຈາກ ອີຊາກ ລູກຊາຍ
ຂອງຕົນ ໄປຢູ່ທາງດິນແດນທິດຕາເວັນອອກ.

## ການຝັງສົບອັບຣາຮາມ

7-8ອັບຣາຮາມ ເຖົ້າ ແກ່ຫລາຍ ເພິ່ນ ໄດ້ ເຖິງ ແກ່ກຳ ໄປຢູ່ນຳພີ່ນ້ອງທີ່ຕາຍ ໄປກ່ອນ ແລ້ວ ເມື່ອ
ອາຍຸ 175 ປີ. 9ອີຊາກ ແລະ ອິດຊະມາເອນ ລູກຊາຍຂອງເພິ່ນໄດ້ຝັງສົບໄວ້ໃນອຸບມຸງ ມັກເປ-
ລາ ໃນນາທີ່ເພິ່ນໄດ້ຊື້ຈາກ ເອຟະໂຣນ ລູກຊາຍຂອງ ໂຊຣາ ຊາວ ຮິດຕີ ຢູ່ທາງຕາເວັນອອກ

ຂອງ ເມືອງ ມາມເຣ. [10-11]ສົບຂອງ ອັບຣາຮາມ ແລະ ເມຍຂອງ ເພິ່ນກໍໄດ້ຝັງໃນບາຕອນນີ້ຄືກັນ
ຫລັງຈາກ ອັບຣາຮາມ ໄດ້ເຖິງ ແກ່ກຳໄປແລ້ວ ພຣະເຈົ້າ ຊົງອວຍພອນ ອີຊາກ ຜູ້ຊຶ່ງໄດ້ອາໄສຢູ່
ໃກ້ນ້ຳສ້າງທີ່ຊື່ວ່າ, "ນ້ຳສ້າງຂອງອົງ ພຣະຜູ້ເປັນເຈົ້າຜູ້ຊົງເຫັນຂ້ອຍ."

[12]ເຊື້ອສາຍຂອງ ອິດຊະມາເອນ ລູກຊາຍ ອັບຣາຮາມ ແລະນາງ ຮາກາ ຄົນ ເອຢິບ ຊຶ່ງເປັນ
ສາວໃຊ້ນາງ ຊາຣາ ມີດັ່ງນີ້:

[13]ຊື່ລູກຊາຍຂອງ ອິດຊະມາເອນ ຕາມລຳດັບກຳເນີດຄື ເນບາໂຢດ ລູກກົກ ຕໍ່ມາ ເກດາ ອັດ-
ເບເອນ ມິບສາມ. [14-16]ມິຊະມາ ດູມາ ມັດສາ ຮາດັດ ເຕມາ ເຢຕູເຣ ນາຟີດ ແລະ ເກເດ-
ມາ ຄົນ ເຫລົ່ານີ້ແມ່ນລູກຊາຍຂອງ ອິດຊະມາເອນ ຊຶ່ງຊື່ຂອງພວກເຂົາກາຍເປັນຊື່ບ້ານ ຊື່ບ່ອນ
ພັກອາໄສ ແລະຊື່ສິບສອງເຜົ່າໃນຈຳນວນເຜົ່າຕ່າງໆ.

[17]ເມື່ອ ອິດຊະມາເອນ ມີອາຍຸ 137 ປີ ເພິ່ນກໍເຖິງແກ່ກຳໄປຢູ່ນຳພີ່ນ້ອງທີ່ຕາຍໄປກ່ອນແລ້ວ.
[18]ເຊື້ອສາຍຂອງ ອິດຊະມາເອນ ໄດ້ອາໄສຢູ່ໃນດິນແດນ ລະຫວ່າງເມືອງ ຮາວິລາ ຈົນເຖິງເມືອງ
ຊູເຣ ທາງທິດຕາເວັນອອກຂອງປະເທດ ເອຢິບ ທາງໄປສູ່ປະເທດ ອັດຊີເຣຍ ພວກເຂົາອາໄສຢູ່
ຕ່າງຫາກຈາກຍາດພີ່ນ້ອງຂອງເຂົາ.

## ການເກີດຂອງເອຊາວແລະຢາໂຄບ

[19]ເລື່ອງຂອງ ອີຊາກ ລູກຊາຍຂອງ ອັບຣາຮາມ ເປັນມາດັ່ງນີ້: [20]ອີຊາກ ມີອາຍຸໄດ້ສີ່ສິບປີ
ເມື່ອ ແຕ່ງງານກັບນາງ ເຣເບກາ ນ້ອງສາວ ລາບານ ລູກ ເບທູເອນ ຊາວ ອາຣາມ ຊຶ່ງມາຈາກ
ປະເທດ ເມໂຊໂປຕາເມຍ.

[21]ຍ້ອນນາງ ເຣເບກາ ບໍ່ມີລູກ ອີຊາກ ຈຶ່ງອະທິຖານຕໍ່ ພຣະຜູ້ເປັນເຈົ້າ ພຣະອົງຊົງຕອບຄຳ
ອະທິຖານຂອງລາວ ໂດຍໃຫ້ນາງ ເຣເບກາ ຖືພາ. [22]ເມື່ອນາງຖືພາຢູ່ນັ້ນ ລູກຝາແຝດໄດ້ບຽດ
ສຽດກັນຢູ່ໃນທ້ອງ ນາງຈຶ່ງເວົ້າວ່າ, "ຖ້າຫາກເປັນເຊັ່ນນີ້ ເປັນຫຍັງຂ້ອຍຈຶ່ງຢາກມີລູກ?" ແລ້ວ
ນາງຈຶ່ງໄປອ້ອນວອນກາບທູນຕໍ່ ພຣະເຈົ້າກ່ຽວກັບເລື່ອງນີ້. [23]ພຣະຜູ້ເປັນເຈົ້າກ່າວວ່າ,

"ເດັກສອງຄົນທີ່ຢູ່ໃນທ້ອງຂອງເຈົ້າ ຈະເກີດເປັນ
ປະຊາຊົນສອງປະເທດຕໍ່ສູ້ກັນ ຜູ້ໜຶ່ງຈະແຂງແຮງ
ກວ່າອີກຜູ້ໜຶ່ງ ອ້າຍຈະຮັບໃຊ້ນ້ອງ."

[24-25]ຄັນຢູ່ຕໍ່ມາ ນາງກໍອອກລູກຝາແຝດສອງຄົນ ລູກຊາຍຜູ້ອອກກ່ອນແດງ ແລະມີຂົນ
ເຕັມຕົວຄືເສື້ອທີ່ເຮັດດ້ວຍຂົນສັດ ດ້ວຍເຫດນີ້ເພິ່ນຈຶ່ງເອີ້ນລາວວ່າ ເອຊາວ. [26]ເມື່ອນ້ອງລາວ
ເກີດມາ ມືກໍຈັບສົ້ນນ່ອງຂອງ ເອຊາວ ໄວ້ ສະນັ້ນເພິ່ນຈຶ່ງເອີ້ນລາວວ່າ ຢາໂຄບ ເມື່ອລູກຊາຍ
ຝາແຝດທັງສອງເກີດ ອີຊາກ ອາຍຸໄດ້ຫົກສິບປີແລ້ວ.

## ເອຊາວຂາຍສິດທິອ້າຍກົກ

[27]ເມື່ອ ເດັກນ້ອຍທັງສອງໃຫຍ່ເຕີບໂຕຂຶ້ນມາ ເອຊາວ ໄດ້ກາຍເປັນນາຍພານທີ່ເກັ່ງກ້າ ແລະ
ຊຳນານ ລາວເປັນຄົນທີ່ບໍ່ມັກຢູ່ເຮືອນ. [28]ສ່ວນ ຢາໂຄບ ເປັນຄົນສຸຂຸມ ແລະມັກຢູ່ແຕ່ໃນເຮືອນ
ອີຊາກ ຮັກ ເອຊາວ ເພາະວ່າໄດ້ກິນຊີ້ນທີ່ລາວຫາມາໄດ້ ສ່ວນນາງ ເຣເບກາ ຮັກຢາໂຄບ.

[29]ມື້ໜຶ່ງ ເມື່ອ ຢາໂຄບ ກຳລັງ ເຮັດ ແກງຢູ່ ພໍດີ ເອຊາວ ກັບມາ ແຕ່ລ່າສັດ ລາວຫິວຫລາຍ.

[30]ຈຶ່ງເວົ້າກັບຢາໂຄບວ່າ, "ຂ້ອຍຂໍກິນແກງໝາກຖົ່ວແດງເຈົ້າຈັກຄຳແດ່ທ້ອນ ຂ້ອຍຫິວຈະຕາຍ
ຢູ່ແລ້ວ" (ດ້ວຍເຫດຜົນດັ່ງກ່າວນີ້ ເພິ່ນຈຶ່ງເອີ້ນເອຊາວວ່າ ເອໂດມ).
[31]ແຕ່ຢາໂຄບຕອບວ່າ, "ຂ້ອຍຈະໃຫ້ເຈົ້າກິນ ຖ້າເຈົ້າຫາກຂາຍສິດທິອ້າຍກົກໃຫ້ຂ້ອຍ."
[32]ເອຊາວເວົ້າວ່າ, "ເບິ່ງແມ! ຂ້ອຍຫິວໃກ້ຈະຕາຍຢູ່ແລ້ວ ສິດທິອ້າຍກົກຈະມີປະໂຫຍດຫຍັງກັບ
ຂ້ອຍ." [33]ຢາໂຄບຈຶ່ງເວົ້າວ່າ, "ສາບານກ່ອນແມ! ວ່າເຈົ້າຈະມອບສິດທິອ້າຍກົກໃຫ້ຂ້ອຍ" ເອ-
ຊາວຈຶ່ງສາບານແລ້ວຂາຍສິດທິອ້າຍກົກຂອງຕົນໃຫ້ຢາໂຄບ.
[34]ຄັນແລ້ວ ຢາໂຄບຈຶ່ງເອົາເຂົ້າຈີ່ ແລະແກງໝາກຖົ່ວໃຫ້ເອຊາວ ລາວກິນ ແລະດື່ມຈົນອີ່ມ
ແລ້ວກໍໜີໄປ ການປະໝາດສິດທິອ້າຍກົກຂອງເອຊາວກໍເປັນມາດັ່ງນີ້ແຫລະ.

# ບົດທີ 26

## ອີຊາກໄປເມືອງເກຣາແລະເມືອງເບເອ-ເຊບາ

[1]ຢູ່ຕໍ່ມາໄດ້ມີການອຶດຢາກເກີດຂຶ້ນໃນປະເທດ ຊຶ່ງການອຶດຢາກຢ່າງນີ້ໄດ້ເຄີຍມີມາແລ້ວໃນ
ສະໄໝອັບຣາຮາມ ອີຊາກຈຶ່ງໄປຫາກະສັດອາບີເມເລັກ ເຈົ້າຊີວິດຂອງພວກຟີລິດສະຕິນທີ່
ເກຣາ. [2]ອົງພຣະຜູ້ເປັນເຈົ້າໄດ້ປະກົດແກ່ອີຊາກ ແລະກ່າວແກ່ເພິ່ນວ່າ, "ຢ່າໄປປະເທດເອຢິບ
ຈົ່ງອາໄສຢູ່ໃນປະເທດທີ່ເຮົາຈະບອກໃຫ້ແກ່ເຈົ້າ. [3]ຄືໃຫ້ຢູ່ໃນປະເທດນີ້ກ່ອນ ເຮົາຈະຢູ່ນຳ ແລະ
ອວຍພອນໃຫ້ເຈົ້າ ເພາະວ່າເຮົາຈະມອບດິນແດນທັງໝົດນີ້ໃຫ້ແກ່ເຈົ້າ ແລະເຊື້ອສາຍຂອງເຈົ້າ
ເຮົາຈະຍຶດຖືຄຳໝັ້ນສັນຍາທີ່ເຮົາໄດ້ໃຫ້ກັບອັບຣາຮາມພໍ່ຂອງເຈົ້າ. [4]ເຮົາຈະໃຫ້ເຈົ້າມີເຊື້ອສາຍ
ຢ່າງຫລວງຫລາຍເໝືອນດັ່ງດວງດາວໃນທ້ອງຟ້າ ແລະເຮົາຈະມອບດິນແດນທັງໝົດນີ້ ໃຫ້
ເຊື້ອສາຍຂອງເຈົ້າ ຊົນຊາດທັງປວງໃນໂລກຈະຂໍໃຫ້ເຮົາອວຍພອນໃຫ້ພວກເຂົາເໝືອນດັ່ງທີ່
ເຮົາອວຍພອນໃຫ້ເຊື້ອສາຍຂອງເຈົ້າ. [5]ກໍເພາະວ່າອັບຣາຮາມໄດ້ເຊື່ອຟັງເຮົາໂດຍໄດ້ຮັກສາຂໍ້
ຄຳສັ່ງທຸກຢ່າງຂອງເຮົາ ເຮົາຈະອວຍພອນໃຫ້ເຈົ້າ".
[6-7]ດັ່ງນັ້ນອີຊາກຈຶ່ງອາໄສຢູ່ໃນເມືອງເກຣາ ເມື່ອຜູ້ຊາຍຊາວເມືອງຖາມກ່ຽວກັບເມຍຂອງ
ເພິ່ນ ເພິ່ນກໍເວົ້າວ່າ, "ນາງເປັນນ້ອງສາວຂອງຂ້ອຍ" ເພິ່ນບໍ່ກ້າເວົ້າວ່ານາງເປັນເມຍ ເພາະ
ຢ້ານພວກຜູ້ຊາຍເມືອງນີ້ຈະຂ້າເພິ່ນ ແລ້ວເອົານາງເຣເບກາຊຶ່ງເປັນຄົນງາມໄປເປັນເມຍ.
[8]ເມື່ອອີຊາກໄດ້ອາໄສຢູ່ໃນເມືອງນີ້ໄດ້ໄລຍະໜຶ່ງແລ້ວ ມື້ໜຶ່ງ ອາບີເມເລັກເຈົ້າຊີວິດຂອງ
ພວກຟີລິດສະຕິນ ຫລຽວລົງມາຈາກປ່ອງຢ້ຽມກໍເຫັນອີຊາກຢອກນາງເຣເບກາເມຍຂອງຕົນ
ຢ່າງສະໜິດສະໜົມ. [9]ກະສັດອາບີເມເລັກຈຶ່ງເອີ້ນອີຊາກມາເຝົ້າ ແລະຊົງກ່າວວ່າ, "ເບິ່ງດູ
ນາງເປັນເມຍຂອງເຈົ້າແທ້ໆ ເປັນຫຍັງເຈົ້າຈຶ່ງເວົ້າວ່າເປັນນ້ອງສາວ?" ເພິ່ນຈຶ່ງທູນວ່າ, "ເພາະ
ຂ້ານ້ອຍຢ້ານວ່າຈະຖືກຂ້າ ຖ້າຫາກເວົ້າວ່ານາງເປັນເມຍຂອງຂ້ານ້ອຍ"
[10]ກະສັດອາບີເມເລັກຈຶ່ງຊົງກ່າວວ່າ, "ເປັນຫຍັງເຈົ້າຈຶ່ງເຮັດກັບເຮົາດັ່ງນີ້? ບາງທີມີຄົນຂອງ
ເຮົາຜູ້ໜຶ່ງອາດນອນກັບເມຍຂອງເຈົ້າກໍໄດ້ ແລ້ວເຈົ້າກໍຈະພາໃຫ້ພວກເຮົາເຮັດຊົ່ວ." [11]ດັ່ງນັ້ນ
ກະສັດອາບີເມເລັກ ຈຶ່ງຊົງມີຄຳສັ່ງໃຫ້ປະຊາຊົນທັງປວງໃນເມືອງນັ້ນວ່າ, "ຖ້າຜູ້ໃດຂົ່ມເຫັງ
ຊາຍຜູ້ນີ້ ແລະເມຍຂອງລາວ ຜູ້ນັ້ນຈະຖືກປະຫານຊີວິດ."

12ອີຊາກ ໄດ້ເຮັດນາໃນປະເທດນີ້ ແລະໃນປີນັ້ນເອງ ເພິ່ນເກັບກ່ຽວເຂົ້າໄດ້ຮ້ອຍເທົ່າໃນຈຳ-
ນວນເຂົ້າທີ່ປູກ ກໍຍ້ອນວ່າພຣະເຈົ້າໄດຊົງອວຍພອນໃຫ້ເພິ່ນ. 13ອີຊາກ ໄດ້ຈະເລີນຮຸ່ງເຮືອງ
ແລະກາຍເປັນຄົນຮັ່ງມີ. 14ເພິ່ນມີຝູງແກະ ຝູງງົວ ແລະມີຂ້າໃຊ້ຢ່າງຫລວງຫລາຍຈົນຊາວຟີ-
ລິດສະຕິນອິດສາເພິ່ນ. 15ພວກເຂົາຈຶ່ງເອົາຂີ້ດິນຖົມນໍ້າສ້າງທຸກໆໜ່ວຍທີ່ຂ້າໃຊ້ຂອງເພິ່ນໄດ້ຂຸດ
ໄວ້ໃນສະໄໝທີ່ຍັງມີຊີວິດຢູ່.

16ຢູ່ຕໍ່ມາກະສັດອາບີເມເລັກ ຈຶ່ງກ່າວຕໍ່ອີຊາກ ວ່າ, "ຈົ່ງໜີຈາກໝູ່ເຮົາເສຍ ເພາະໝູ່ເຈົ້າມີ
ອິດທິພົນຫລາຍກວ່າພວກເຮົາ." 17ດັ່ງນັ້ນ ອີຊາກ ຈຶ່ງອອກໜີຈາກນານັ້ນ ແລະໄປຕັ້ງຄ້າຍພັກ
ອາໄສຢູ່ຮ່ອມພູຂອງເມືອງ ເກຣາ. 18ເພິ່ນໄດ້ຂຸດນໍ້າສ້າງເກົ່າທີ່ອັບຣາຮາມພໍ່ຂອງເພິ່ນໄດ້ຂຸດໄວ້
ໃນສະໄໝກ່ອນນັ້ນ ແຕ່ນໍ້າສ້າງເຫລົ່ານີ້ ພວກຟີລິດສະຕິນ ໄດ້ຖົມຫລັງຈາກ ອັບຣາຮາມ ໄດ້
ເຖິງແກ່ກຳ ອີຊາກ ໄດ້ເອີ້ນຊື່ນໍ້າສ້າງທີ່ຂຸດໃໝ່ນີ້ຄືກັບຊື່ເກົ່າທີ່ພໍ່ຂອງເພິ່ນໄດ້ເອີ້ນມາແລ້ວ.

19ເມື່ອຄົນໃຊ້ຂອງອີຊາກ ໄດ້ຂຸດນໍ້າສ້າງທີ່ຮ່ອມພູ ພວກເຂົາໄດ້ພົບນໍ້າອອກບໍ່. 20ຄົນລ້ຽງ-
ສັດຂອງເມືອງ ເກຣາຊຶ່ງມາຜິດຖຽງກັບຄົນລ້ຽງສັດຂອງອີຊາກ ພວກເຂົາເວົ້າວ່າ, "ນໍ້ານີ້ເປັນ
ຂອງໝູ່ເຮົາ" ດັ່ງນັ້ນອີຊາກ ຈຶ່ງໃສ່ຊື່ບໍ່ນໍ້ານີ້ວ່າ, "ຜິດຖຽງກັນ" ກໍຍ້ອນວ່າພວກເຂົາໄດ້ຜິດຖຽງ
ກັບເພິ່ນ. 21ຄົນໃຊ້ຂອງອີຊາກ ໄດ້ຂຸດນໍ້າສ້າງອີກໜ່ວຍໜຶ່ງແລະບ່ອນນີ້ກໍມີການຜິດຖຽງກັນອີກ
ເພິ່ນໄດ້ໃສ່ຊື່ນໍ້າສ້າງບ່ອນນີ້ວ່າ ສິດນາ. 22ເພິ່ນຈຶ່ງໜີຈາກທີ່ນັ້ນ ແລະໄປຂຸດນໍ້າສ້າງບ່ອນອື່ນ
ອີກ ບັດນີ້ບໍ່ມີການຜິດຖຽງກັນເກີດຂຶ້ນ ດັ່ງນັ້ນ ເພິ່ນຈຶ່ງໃສ່ຊື່ນໍ້າສ້າງນີ້ວ່າ, "ອິດສະຫລະພາບ"
ເພິ່ນເວົ້າວ່າ, "ບັດນີ້ພຣະຜູ້ເປັນເຈົ້າຊົງປະທານອິດສະຫລະພາບ ໃຫ້ແກ່ພວກເຮົາໃນດິນແດນ
ນີ້ ພວກເຮົາກໍຈະມີຄວາມຈະເລີນຮຸ່ງເຮືອງຂຶ້ນໃນທີ່ນີ້."

23-24ຢູ່ມາມື້ໜຶ່ງ ເພິ່ນໄດ້ໄປຍັງເມືອງ ເບເອ-ເຊບາ ໃນຄືນນັ້ນ ພຣະຜູ້ເປັນເຈົ້າໄດ້ຊົງປະກົດ
ຕໍ່ເພິ່ນ ແລະກ່າວວ່າ,

"ເຮົາແມ່ນພຣະເຈົ້າຂອງອັບຣາຮາມພໍ່ຂອງເຈົ້າ
  ຈົ່ງຢ່າສູ່ຢ້ານ ເພາະເຮົາສະຖິດຢູ່ກັບເຈົ້າ
ເຮົາຈະອວຍພອນໃຫ້ເຈົ້າ ມີເຊື້ອສາຍຢ່າງຫລວງຫລາຍ
  ກໍຍ້ອນເຫັນແກ່ອັບຣາຮາມຂ້າໃຊ້ຂອງເຮົາ."

25ສະນັ້ນອີຊາກ ຈຶ່ງສ້າງແທ່ນຖວາຍບູຊາ ແລະນະມັດສະການພຣະຜູ້ເປັນເຈົ້າ ແລ້ວເພິ່ນກໍ
ຕັ້ງຄ້າຍຢູ່ທີ່ນັ້ນ ແລະຄົນໃຊ້ຂອງເພິ່ນກໍໄດ້ຂຸດນໍ້າສ້າງໜ່ວຍໜຶ່ງຂຶ້ນອີກ.

## ການຕົກລົງກັນລະຫວ່າງອີຊາກ ແລະກະສັດອາບີເມເລັກ

26ຢູ່ຕໍ່ມາ ກະສັດອາບີເມເລັກໄດ້ສະເດັດມາແຕ່ເມືອງເກຣາ ພ້ອມອາຮູດຊາດ ທີ່ປຶກສາ
ແລະຟີໂກນນາຍທະຫານ ເພື່ອມາຢ້ຽມຢາມອີຊາກ. 27ອີຊາກໄດ້ທູນຖາມວ່າ, "ດ້ວຍເຫດໃດ
ພະອົງຈຶ່ງສະເດັດມາຫາຂ້ານ້ອຍຈົນເຖິງທີ່ນີ້? ເພາະເມື່ອຄາວກ່ອນພະອົງກຽດຊັງຂ້ານ້ອຍ
ແລະຊົງຂັບໄລ່ຂ້ານ້ອຍອອກຈາກປະເທດຂອງພະອົງ." 28ຝ່າຍກະສັດອາບີເມເລັກຈຶ່ງຕອບວ່າ,
"ບັດນີ້ ພວກເຮົາຮູ້ວ່າພຣະເຈົ້າຊົງສະຖິດຢູ່ກັບເຈົ້າ ພວກເຮົາຈຶ່ງຄິດວ່າ ຂໍໃຫ້ເຮົາມີການຕົກລົງ
ສັນຍາລະຫວ່າງເຈົ້າ ແລະເຮົາ. 29ພວກເຮົາປະສົງຢາກໃຫ້ເຈົ້າສັນຍາວ່າຈະບໍ່ທຳຮ້າຍພວກເຮົາ

ເຊັ່ນດຽວກັນກັບທີ່ພວກເຮົາບໍ່ໄດ້ເຄີຍທຳຮ້າຍພວກເຈົ້າ ພວກເຮົາໄດ້ແຕ່ສ້າງຄວາມດີ ແລະ
ປ່ອຍໃຫ້ເຈົ້າຢູ່ຢ່າງສະຫງົບສຸກ ບັດນີ້ເຈົ້າໄດ້ຮັບພຣະພອນແລ້ວ".
30ອີຊາກ ຈຶ່ງໄດ້ຈັດງານກິນລ້ຽງຢ່າງຄຶກຄື້ນ ແລະພວກເຂົາກໍກິນ ແລະດື່ມຢ່າງສຳລານໃຈ.
31ໃນຕອນເຊົ້າມືດ ທັງສອງຝ່າຍໄດ້ສາບານຕໍ່ກັນແລະກັນ ແລ້ວອີຊາກ ຈຶ່ງໄປສົ່ງພວກເຂົາກັບ
ເມືອ ພວກເຂົາກໍອຳລາຈາກເພິ່ນໄປຢ່າງເປັນມິດທີ່ດີ.
32ໃນມື້ນັ້ນເອງ ຄົນໃຊ້ຂອງ ອີຊາກ ມາບອກກ່ຽວກັບການຂຸດສ້າງວ່າ, "ພວກເຮົາພົບນ້ຳ
ແລ້ວ." 33ເພິ່ນເອີ້ນຊື່ນ້ຳສ້າງນັ້ນວ່າ ຊີບາ ດ້ວຍເຫດຜົນດັ່ງນີ້ ເມືອງນັ້ນຈຶ່ງມີຊື່ວ່າ ເບເອ-ເຊ-
ບາ.

### ເມຍຂອງເອຊາວ

34ເມື່ອ ເອຊາວ ມີອາຍຸສີ່ສິບປີ ເພິ່ນໄດ້ແຕ່ງງານກັບນາງ ຢູດິດ ລູກສາວຂອງ ເບເອຣີ ຊາວ
ຮິດຕີ ແລະນາງ ບາເຊມາດ ລູກສາວຂອງ ເອໂລນ ຊາວຮິດຕີ. 35ຜູ້ຍິງທັງສອງນີ້ໄດ້ສ້າງຄວາມບໍ່
ພໍໃຈໃຫ້ແກ່ອີຊາກ ແລະນາງ ເຣເບກາ ເປັນຢ່າງຍິ່ງ.

# ບົດທີ 27

## ຢາໂຄບຫລອກລວງພໍ່ເພື່ອຂໍພອນ

1ອີຊາກ ເຖົ້າ ແກ່ຫລາຍຈົນຕາເພິ່ນບໍ່ເຫັນຮຸ່ງ ເພິ່ນເອີ້ນ ເອຊາວ ລູກຊາຍກົກມາແລ້ວເວົ້າວ່າ,
"ລູກເອີຍ" ລາວຈຶ່ງຕອບວ່າ, "ໂດຍຂ້ານ້ອຍ." 2ອີຊາກ ເວົ້າຕໍ່ໄປວ່າ, "ເຈົ້າກໍເຫັນແລ້ວວ່າພໍ່ເຖົ້າ
ຫລາຍ ແລະອາດຈະຕາຍມື້ໃດມື້ໜຶ່ງໃນໄວໆນີ້ກໍໄດ້. 3ບັດນີ້ ຈົ່ງເອົາອາວຸດຂອງເຈົ້າຄືທະນູ
ແລະລູກສອນ ແລ້ວເຂົ້າໄປລ່າສັດໃນປ່າມາໃຫ້ພໍ່. 4ຈົ່ງເຮັດອາຫານແຊບໆ ທີ່ພໍ່ມັກແລ້ວເອົາ
ມາໃຫ້ພໍ່ກິນ ເມື່ອພໍ່ກິນອີ່ມແລ້ວພໍ່ຈະອວຍພອນໃຫ້ແກ່ເຈົ້າເປັນຄັ້ງສຸດທ້າຍກ່ອນພໍ່ຈະຕາຍ."
5ເມື່ອ ອີຊາກ ເວົ້າກັບ ເອຊາວ ນາງ ເຣເບກາ ກໍໄດ້ຍິນເລື່ອງນັ້ນ ຄັນແລ້ວ ພໍ ເອຊາວ ອອກ
ຈາກເມືອງໄປລ່າສັດມາໃຫ້ພໍ່. 6ນາງ ເຣເບກາ ຈຶ່ງເວົ້າກັບ ຢາໂຄບ ວ່າ, "ແມ່ໄດ້ຍິນພໍ່ເຈົ້າເວົ້າກັບ
ເອຊາວ ອ້າຍຂອງ ເຈົ້າວ່າ. 7ເຈົ້າຈົ່ງໄປລ່າສັດ ແລ້ວເຮັດອາຫານແຊບໆໃຫ້ພໍ່ ເມື່ອພໍ່ກິນອີ່ມ
ແລ້ວ ພໍ່ຈະອວຍພອນໃຫ້ເຈົ້າຕໍ່ໜ້າ ພຣະຜູ້ເປັນເຈົ້າ ກ່ອນພໍ່ຈະຕາຍ. 8ບັດນີ້ລູກເອີຍ ຈົ່ງຟັງ
ແລະເຮັດໃນສິ່ງທີ່ແມ່ບອກ. 9ຈົ່ງໄປທີ່ຝູງແບ້ ແລະເອົາລູກແບ້ໂຕຕຸ້ຍພີ ສອງໂຕມາໃຫ້ແມ່ ເພື່ອ
ແມ່ຈະເຮັດອາຫານຢ່າງແຊບໆ ທີ່ພໍ່ເຈົ້າມັກ. 10ແລ້ວເຈົ້າຈົ່ງ ເອົາອາຫານນັ້ນໄປໃຫ້ພໍ່ເຈົ້າກິນ
ແລະເພິ່ນຈະອວຍພອຍໃຫ້ເຈົ້າກ່ອນເພິ່ນຈະຕາຍ."
11ແຕ່ ຢາໂຄບ ເວົ້າຕໍ່ ແມ່ວ່າ, "ແມ່ກໍຮູ້ວ່າ ເອຊາວ ເປັນຄົນມີຂົນ ສ່ວນລູກມີຕົນຕົວກ້ຽງ.
12ບາງທີພໍ່ເພິ່ນອາດຈະລູບເບິ່ງ ແລະຮູ້ວ່າລູກກຳລັງຫລອກລວງເພິ່ນ ດັ່ງນັ້ນ ແທນທີ່ລູກຈະໄດ້
ຮັບຄວາມພອນຈາກເພິ່ນກໍເລີຍຈະໄດ້ຮັບຄວາມປ້ອຍດ່າແທນ." 13ແມ່ໄດ້ຕອບລາວວ່າ, "ລູກ
ເອີຍ ຂໍໃຫ້ຄວາມປ້ອຍດ່າຕົກເປັນຂອງແມ່ ຈົ່ງໄປເອົາແບ້ທີ່ແມ່ບອກນັ້ນມາ."
14ດັ່ງນັ້ນ ລາວຈຶ່ງໄປຫາເອົາແບ້ມາໃຫ້ ແລະແມ່ໄດ້ເຮັດອາຫານອັນແຊບໆທີ່ອີຊາກ ມັກກິນ.
15ແລ້ວນາງ ເຣເບກາ ຈຶ່ງ ເອົາ ເສື້ອ ໂຕງາມໆ ຂອງ ເອຊາວ ທີ່ມີຢູ່ໃນ ເຮືອນມາໃຫ້ ຢາໂຄບ ນຸ່ງ.

16ນາງໄດ້ເອົາໜັງແກະມາປົກແຂນ ແລະຄໍອັນກ້ຽງຂອງລາວ. 17ແລ້ວນາງຈຶ່ງເອົາອາຫານຢ່າງ
ແຊບໆ ແລະເຂົ້າຈີ່ທີ່ນາງເຮັດມາໃຫ້ຢາໂຄບຖືໄປ.

18ຢາໂຄບ ເຂົ້າໄປຫາພໍ່ແລະເວົ້າວ່າ, "ພໍ່ຂ້ານ້ອຍເອີຍ" ທ່ານຕອບວ່າ, "ແມ່ນຫຍັງລູກ? ເຈົ້າ
ແມ່ນລູກຊາຍຄົນໃດ?" 19ຢາໂຄບ ຕອບວ່າ, "ຂ້ານ້ອຍແມ່ນ ເອຊາວ ລູກຊາຍກົກ ຂ້ານ້ອຍໄດ້
ເຮັດສິ່ງທີ່ພໍ່ບອກແລ້ວ ຈົ່ງລຸກຂຶ້ນມາຮັບປະທານອາຫານນີ້ສາ ເພື່ອວ່າຂ້ານ້ອຍຈະໄດ້ຮັບຄວາມ
ພອນຈາກພໍ່." 20ອີຊາກ ເວົ້າວ່າ, "ລູກໄດ້ມາແຕ່ໃສໄວແທ້?" ຢາໂຄບ ຕອບວ່າ, "ພຣະຜູ້ເປັນ-
ເຈົ້າ ຂອງພໍ່ໄດ້ຊ່ວຍຂ້ານ້ອຍ." 21ອີຊາກ ເວົ້າຕໍ່ຢາໂຄບ ວ່າ, "ຈົ່ງຫຍັບເຂົ້າມາໃກ້ໆພີ້ເພື່ອພໍ່ຈະ
ໄດ້ລູບເຈົ້າວ່າແມ່ ເອຊາວ ແທ້ຫລືບໍ່."

22ຢາໂຄບ ຫຍັບເຂົ້າໄປໃກ້ໆພໍ່ ເພິ່ນລູບຄຳລາວແລະເວົ້າວ່າ, "ສຽງປາກຂອງເຈົ້າຄືກັນກັບ
ສຽງປາກຢາໂຄບ ແຕ່ແຂນຂອງເຈົ້າຄືກັນກັບແຂນ ເອຊາວ." 23ເພິ່ນບໍ່ຮູ້ຈັກວ່າແມ່ນຢາໂຄບ ກໍ
ເພາະວ່າແຂນຂອງລາວມີຂົນຄືກັນກັບແຂນ ເອຊາວ. 24ເພິ່ນຈຶ່ງເລີ່ມຕົ້ນອວຍພອນໃຫ້ລາວ ແຕ່
ຍັງຖາມຊ້ຳອີກ ວ່າ, "ເຈົ້າແມ່ນ ເອຊາວ ແທ້ບໍ່?" ລາວຈຶ່ງຕອບວ່າ, "ຂ້ານ້ອຍແມ່ນ ເອຊາວ ແທ້."
25ອີຊາກ ເວົ້າວ່າ, "ຈົ່ງເອົາອາຫານຂອງເຈົ້າມາ ເມື່ອກິນອີ່ມແລ້ວພໍ່ຈະອວຍພອນໃຫ້ເຈົ້າ" ຢາ-
ໂຄບ ຈຶ່ງເອົາອາຫານມາໃຫ້ພໍ່ກິນ ແລ້ວເອົາເຫລົ້າອະງຸ່ນໃຫ້ດື່ມ. 26ຄັນແລ້ວພໍ່ຈຶ່ງເວົ້າວ່າ, "ລູກ
ເອີຍຈົ່ງຫຍັບເຂົ້າມາໃກ້ໆແລ້ວຈູບພໍ່." 27ຢາໂຄບ ຈຶ່ງຫຍັບເຂົ້າມາຈູບພໍ່ ພໍເມື່ອ ອີຊາກ ໄດ້ກິ່ນ
ເຄື່ອງນຸ່ງຂອງ ເອຊາວ ເພິ່ນຈຶ່ງອວຍພອນໃຫ້ລາວວ່າ,

"ກິ່ນຫອມຂອງລູກຊາຍຂ້ອຍນີ້
ຄ້າຍຄືກັນກັບກິ່ນຫອມຂອງທົ່ງນາ
ທີ່ ພຣະຜູ້ເປັນເຈົ້າ ຊົງໄດ້ອວຍພອນໃຫ້.
28 ຂໍ ພຣະເຈົ້າ ຊົງປະທານຄວາມຊຸ່ມຊື່ນມາແຕ່ສະຫວັນ ເພື່ອໃຫ້ທົ່ງນາ
ຂອງເຈົ້າອຸດົມສົມບູນໄປດ້ວຍຕົ້ນເຂົ້າ ແລະຕົ້ນອະງຸ່ນ.
29 ຂໍໃຫ້ປະຊາຊົນໃນຊາດຕ່າງໆ ເຊື່ອຟັງ ແລະຂາບລົງຕໍ່ໜ້າເຈົ້າ
ຜູ້ທີ່ດ່າເຈົ້າ ຜູ້ນັ້ນຈະຖືກດ່າ
ແລະຜູ້ທີ່ອວຍພອນເຈົ້າ ຜູ້ນັ້ນຈະໄດ້ຮັບພອນ."

30ເມື່ອຢາໂຄບ ໄດ້ຮັບພອນຈາກ ອີຊາກ ແລ້ວ ລາວກໍລາໄປ ຫລັງຈາກນັ້ນມາໜ້ອຍໜຶ່ງ ເອ-
ຊາວ ຜູ້ເປັນອ້າຍກໍກັບມາແຕ່ລ່າສັດ. 31ລາວໄດ້ຄົວອາຫານອັນແຊບໆ ແລ້ວເອົາໄປໃຫ້ພໍ່ ລາວ
ເວົ້າວ່າ, "ພໍ່ເອີຍ ຈົ່ງລຸກຂຶ້ນມາຮັບປະທານອາຫານຂອງຂ້ານ້ອຍເທາະ ເພື່ອພໍ່ຈະໄດ້ອວຍພອນ
ໃຫ້ຂ້ານ້ອຍ." 32ອີຊາກ ຈຶ່ງຖາມລາວວ່າ "ເຈົ້າແມ່ນໃຜ?" ລາວຈຶ່ງຕອບວ່າ, "ຂ້ານ້ອຍແມ່ນ ເອ-
ຊາວ ລູກກົກຂອງພໍ່." 33ພໍໄດ້ຍິນດັ່ງນັ້ນ ອີຊາກ ກໍສະດຸ້ງພ້ອມທັງສັ່ນໝົດຕົວ ແລ້ວຖາມວ່າ,
"ຄັນຊັ້ນແມ່ນຜູ້ໃດທີ່ຂ້າສັດແລ້ວຈັດແຈ່ງອາຫານເອົາມາໃຫ້ພໍ່ກິນ? ພໍ່ໄດ້ກິນ ແລະໄດ້ອວຍພອນ
ເທື່ອສຸດທ້າຍ ໃຫ້ລາວຫາກໍ ແລ້ວກ່ອນ ເຈົ້າມານີ້ ແລະລາວກໍໄດ້ຮັບຄວາມພອນນັ້ນຢ່າງເດັດ-
ຂາດ."

34ເມື່ອ ເອຊາວ ໄດ້ຍິນເຊັ່ນນັ້ນ ລາວກໍຮ້ອງໄຫ້ຂຶ້ນດ້ວຍຄວາມຂົມຂື່ນ ແລະເວົ້າວ່າ, "ພໍ່ຂ້າ-

ນ້ອຍ  ຈົ່ງໃຫ້ພອນຂ້ານ້ອຍຄືກັນເທາະ.”  35ອີຊາກຕອບວ່າ, “ນ້ອງຂອງເຈົ້າໄດ້ຫລອກລວງພໍ່
ລາວໄດ້ເອົາພອນທີ່ເຈົ້າຄວນຈະໄດ້ຮັບໄປແລ້ວ.”  36ເອຊາວ ເວົ້າວ່າ, “ນີ້ແມ່ນເທື່ອທີສອງແລ້ວທີ່
ລາວໂກງຂ້ານ້ອຍ  ກໍບໍ່ແມ່ນຍ້ອນລາວຊື່ຢາໂຄບ  ຫລື?  ລາວໄດ້ເອົາສິດທິການເປັນອ້າຍກົກ
ຂອງຂ້ານ້ອຍໄປແລ້ວ  ແລະບັດນີ້ລາວໄດ້ເອົາຄວາມພອນຂອງຂ້ານ້ອຍໄປອີກ  ພໍ່ບໍ່ມີຄວາມ
ພອນທີ່ເຫລືອໄວ້ໃຫ້ຂ້ານ້ອຍແດ່ບໍ?”

37ອີຊາກ ໄດ້ຕອບ ເອຊາວ ວ່າ,  “ພໍ່ໄດ້ອວຍພອນໃຫ້ລາວເປັນນາຍເຈົ້າ  ແລະເປັນນາຍພວກ
ຍາດພີ່ນ້ອງທັງຫລາຍ  ພ້ອມທັງໃຫ້ລາວມີເຂົ້າ  ແລະເຫລົ້າອະງຸ່ນຢ່າງອຸດົມສົມບູນ  ບັດນີ້  ຈະ
ຍັງເຫລືອຫຍັງອີກ  ທີ່ພໍ່ສາມາດເຮັດໃຫ້ເຈົ້າໄດ້  ລູກເອີຍ”  38ເອຊາວ ຊັກຖາມພໍ່ວ່າ,  “ພໍ່ເອີຍ
ຄວາມພອນຂອງພໍ່ມີເທົ່ານັ້ນບໍ?  ຂໍອວຍພອນໃຫ້ຂ້ານ້ອຍແດ່ທ້ອນ”.

39ລາວເວົ້າພ້ອມທັງຮ້ອງໄຫ້  ຄັນແລ້ວອີຊາກ ເວົ້າຕໍ່ລາວວ່າ,

ເຈົ້າຈະຢູ່ໄກຈາກດິນທີ່ອຸດົມສົມບູນ
ແລະທົ່ງນາຂອງເຈົ້າກໍຈະບໍ່ໄດ້ຮັບຄວາມຊຸ່ມຊື່ນຈາກສະຫວັນ.
40 ເຈົ້າຈະລ້ຽງຊີວິດດ້ວຍດາບ  ແລະຈະເປັນຂ້າໃຊ້ນ້ອງຊາຍຂອງເຈົ້າ.
ແຕ່ວ່າເມື່ອເຈົ້າຫາກກະບົດເມື່ອໃດ  ເຈົ້າຈະປົດແອກຂອງລາວອອກຈາກຄໍຂອງເຈົ້າ.”

41ເອຊາວກຽດຊັງຢາໂຄບກໍຍ້ອນວ່າ  ພໍ່ໄດ້ໃຫ້ພອນແກ່ລາວ  ເອຊາວຄິດວ່າ, “ມື້ໄວ້ອາໄລພໍ່
ຂອງເຮົາກໍໃກ້ເຂົ້າມາແລ້ວ  ເມື່ອວັນນັ້ນສິ້ນສຸດລົງ  ເຮົາກໍຈະຂ້າຢາໂຄບ ເສຍ.”

42“ແຕ່ນາງ ເຣເບກາ ຮູ້ແຜນການຂອງ ເອຊາວ ກ່ອນຈຶ່ງໄປບອກຢາໂຄບ ວ່າ  “ເອຊາວ ອ້າຍ
ຂອງເຈົ້າກຳລັງວາງແຜນການຈະຂ້າເຈົ້າເພື່ອແກ້ແຄ້ນ.  43ບັດນີ້  ລູກເອີຍ  ຈົ່ງເຮັດສິ່ງທີ່ແມ່ບອກ
ຈົ່ງຕຽມຕົວແລ້ວໜີໄປຢູ່ນຳລາບານລຸງຂອງເຈົ້າທີ່ເມືອງຮາຣານ ເສຍ.  44-45ຢູ່ກັບເພິ່ນໄລຍະໜຶ່ງ
ກ່ອນ  ຈົນກວ່າອ້າຍເຈົ້າຈະເຊົາຄຽດ  ແລະລືມສິ່ງທີ່ເຈົ້າໄດ້ເຮັດກັບລາວ  ແມ່ຈະໃຊ້ໃຫ້ຄົນໄປ
ເອົາເຈົ້າກັບຄືນມາ  ເພາະວ່າແມ່ບໍ່ຢາກຈະສູນເສຍລູກທັງສອງພ້ອມກັນໃນມື້ດຽວ.”

### ອີຊາກສົ່ງຢາໂຄບໄປຫາລາບານ

46ນາງ ເຣເບກາ ເວົ້າຕໍ່ ອີຊາກ ວ່າ,  “ຂ້ອຍເບື່ອໜ່າຍທີ່ ເອຊາວ ເອົາເມຍຕ່າງຊາດ  ຫາກຢາ-
ໂຄບ ແຕ່ງງານກັບຍິງສາວຊາວຮິດຕີ ອີກ  ໃຫ້ຂ້ອຍຕາຍເສຍດີກວ່າ.”

# ບົດທີ 28

1ອີຊາກ ໄດ້ເອີ້ນ ຢາໂຄບ ມາ  ເພື່ອອວຍພອນໃຫ້ລາວແລ້ວຈຶ່ງສັ່ງວ່າ,  “ລູກຢ່າແຕ່ງງານກັບ
ສາວ ການາອານ ເດີ້  2ຈົ່ງຕຽມຕົວໄປຫາ ເບທູເອນ  ພໍ່ເຖົ້າຂອງເຈົ້າທີ່ປະເທດ ເມໂຊໂປຕາເມຍ
ແລະຫາເອົາຍິງສາວຜູ້ໜຶ່ງໃນຈຳນວນລູກສາວຂອງ ລາບານ ລຸງຂອງເຈົ້າ.  3ຂໍ ພຣະເຈົ້າ ຜູ້ມີອຳ-
ນາດຍິ່ງໃຫຍ່  ຈົ່ງອວຍພອນເຈົ້າ  ແລະປະທານລູກເຕົ້າຢ່າງຫລວງຫລາຍໃຫ້ເພື່ອວ່າເຈົ້າຈະໄດ້
ເປັນບັນພະບູລຸດຂອງຊົນຊາດຕ່າງໆ.  4ຂໍພຣະອົງຊົງອວຍພອນເຈົ້າ  ແລະເຊື້ອສາຍ ເໝືອນດັ່ງ
ໄດ້ອວຍພອນໃຫ້ອັບຣາຮາມ  ເພື່ອເຈົ້າຈະໄດ້ເປັນເຈົ້າຂອງດິນແດນທີ່ເຈົ້າອາໄສຢູ່ນີ້ ທີ່ພຣະອົງ
ໄດ້ຊົງປະທານໃຫ້ອັບຣາຮາມ.”  5ອີຊາກ ໄດ້ສົ່ງ ຢາໂຄບ ໄປດັ່ງໄດ້ບອກ  ແລ້ວລາວກໍອອກເດີນ-

ທາງໄປຫາ ລາບານ ລຸງຂອງລາວ ຄືຊາວ ອາຣາມ ທີ່ປະເທດ ເມໂຊໂປຕາເມຍ ລາບານ ເປັນອ້າຍຂອງນາງ ເຣເບກາຜູ້ເປັນແມ່ຂອງຢາໂຄບ ແລະ ເອຊາວ.

## ເອຊາວເອົາເມຍໃໝ່ອີກ

6ເອຊາວ ຮູ້ວ່າ ອີຊາກ ໄດ້ອວຍພອນ ແລະສັ່ງຢາໂຄບວ່າ, “ຢ່າໄປເອົາສາວຊາວ ການາອານ
ມາເປັນເມຍ ໃຫ້ໄປຊອກຫາເອົາເມຍທີ່ປະເທດ ເມໂຊໂປຕາເມຍ. 7ເອຊາວ ຮູ້ວ່າ ຢາໂຄບ ຟັງ
ຄວາມຂອງພໍ່ແມ່ ແລະໄດ້ໄປປະເທດ ເມໂຊໂປຕາເມຍ ແລ້ວ. 8ດັ່ງນັ້ນ ລາວຈຶ່ງເຂົ້າໃຈວ່າ ອີ-
ຊາກ ບໍ່ມັກສາວຊາວ ການາອານ. 9ລາວ ຈຶ່ງ ໄປຫາ ອິດຊະມາເອນ ລູກຊາຍ ອັບຣາຮາມ ແລ້ວ
ແຕ່ງງານໃໝ່ອີກກັບນາງ ມາຮາລາດ ນ້ອງສາວ ເນບາໂຢດ ລູກຂອງ ອິດຊະມາເອນ.

## ຄວາມຝັນຂອງຢາໂຄບທີ່ເບັດເອນ

10ຢາໂຄບ ໜີຈາກ ເບເອ-ເຊບາ ແລະມຸ່ງໜ້າໄປຍັງເມືອງ ຮາຣານ. 11ລາວມາຮອດບ່ອນໜຶ່ງ
ພໍດີເປັນເວລາຄໍ່າຈຶ່ງພັກແຮມຢູ່ທີ່ນັ້ນ ລາວລົ້ມນອນລົງ ໂດຍເອົາກ້ອນຫີນໝູນຕາງໝອນ. 12ເມື່ອ
ຫລັບໄປລາວຝັນ ເຫັນຂັ້ນໄດ ແຕ່ດິນຈົນຈຸຟ້າ ບັນດາທູດຂອງ ພຣະເຈົ້າ ກຳລັງຍ່າງຂຶ້ນຍ່າງລົງ
ຕາມຂັ້ນໄດນັ້ນ. 13ແລ້ວລາວຈຶ່ງເຫັນອົງ ພຣະຜູ້ເປັນເຈົ້າ ຢືນຢູ່ ແລະກ່າວແກ່ລາວວ່າ, “ເຮົາ
ແມ່ນອົງ ພຣະຜູ້ເປັນເຈົ້າ ຂອງ ອັບຣາຮາມ ແລະ ອີຊາກ ເຮົາຈະປະທານດິນແດນທີ່ ເຈົ້າກຳລັງ
ນອນຢູ່ນີ້ໃຫ້ເຈົ້າ ແລະເຊື້ອສາຍຂອງເຈົ້າ. 14ເຊື້ອສາຍຂອງເຈົ້າຈະຫລວງຫລາຍ ເໝືອນດັ່ງຂີ້-
ຝຸ່ນດິນ ພວກເຂົາຈະແຜ່ຜາຍເຂດແດນໄປທົ່ວທຸກທິດ ແລະທຸກຊົນຊາດຈະຂໍໃຫ້ເຮົາອວຍພອນ
ເຂົາເຫມືອນດັ່ງທີ່ເຮົາໄດ້ອວຍພອນເຈົ້າ ແລະເຊື້ອສາຍຂອງເຈົ້າ. 15ຈົ່ງຈື່ໄວ້ວ່າເຮົາຈະຢູ່ນຳເຈົ້າ
ແລະປົກປັກຮັກສາເຈົ້າທຸກທີ່ທຸກບ່ອນທີ່ເຈົ້າໄປ ແລະເຮົາຈະໃຫ້ເຈົ້າກັບມາຢູ່ໃນດິນແດນນີ້ ເຮົາ
ຈະຢູ່ນຳເຈົ້າຈົນກວ່າເຮົາໄດ້ເຮັດທຸກຢ່າງທີ່ໄດ້ບອກເຈົ້າແລ້ວ.”

16ເມື່ອຢາໂຄບ ຕື່ນຂຶ້ນຈຶ່ງເວົ້າວ່າ, “ອົງ ພຣະຜູ້ເປັນເຈົ້າ ສະຖິດຢູ່ບ່ອນນີ້ແທ້ ແຕ່ເຮົາບໍ່ຮູ້ຈັກ.”
17ລາວຈຶ່ງຢ້ານ ແລະເວົ້າວ່າ, “ບ່ອນນີ້ເປັນບ່ອນສັກສິດ ອາດເປັນເຮືອນຂອງ ພຣະເຈົ້າ ແລະ
ປະຕູສະຫວັນກໍໄດ້.

18ຢາໂຄບ ຈຶ່ງລຸກຂຶ້ນ ແຕ່ເຊົ້າມືດ ແລ້ວໄດ້ເອົາກ້ອນຫີນທີ່ໝູນຫົວນັ້ນຕັ້ງ ເປັນເສົາອະນຸສອນ
ຄັນແລ້ວຈຶ່ງ ເອົານ້ຳມັນຫອມເທໃສ່ ເພື່ອອຸທິດບ່ອນນີ້ແກ່ ພຣະເຈົ້າ. 19ລາວເອີ້ນບ່ອນນີ້ວ່າ ເບັດ-
ເອນ (ແຕ່ກ່ອນເມືອງນັ້ນຊື່ວ່າ ລູເຊ). 20ຢາໂຄບ ສາບານຕໍ່ ພຣະຜູ້ເປັນເຈົ້າວ່າ “ຖ້າພຣະອົງຊົງ
ປົກປັກຮັກສາຂ້ານ້ອຍ ໃນການເດີນທາງ ໃຫ້ອາຫານ ແລະເຄື່ອງນຸ່ງຫົ່ມ. 21ຈົນຂ້ານ້ອຍກັບຄືນ
ເຖິງບ້ານພໍ່ຂອງຂ້ານ້ອຍ ຢ່າງປອດໄພ ແລ້ວ ພຣະອົງ ຈຶ່ງ ຈະ ເປັນ ພຣະເຈົ້າ ຂອງຂ້ານ້ອຍ ແທ້.
22ກ້ອນຫີນຊຶ່ງຂ້ານ້ອຍໄດ້ຕັ້ງຂຶ້ນເປັນເສົາອະນຸສອນນັ້ນກໍຈະເປັນເຮືອນຂອງພຣະອົງ ແລະຂ້າ-
ນ້ອຍກໍຈະຖວາຍໜຶ່ງສ່ວນສິບ ໃນສິ່ງຂອງທຸກໆຢ່າງທີ່ພຣະອົງໄດ້ຊົງປະທານໃຫ້ແກ່ຂ້ານ້ອຍ.”

# ບົດທີ 29

## ຢາໂຄບຮອດເຮືອນລາບານ

1ຢາໂຄບ ໄດ້ເດີນທາງຕໍ່ໄປຈົນເຖິງດິນແດນຂອງຊາວຕາເວັນອອກ. 2ເມື່ອຫລຽວໄປໃນທັນທີ

ທັນໃດນັ້ນ ລາວກໍເຫັນນໍ້າສ້າງຢູ່ໃນທົ່ງນາ ພ້ອມທັງແກະສາມຝູງນອນພັກຜ່ອນຢູ່ໃກ້ທີ່ນັ້ນໝົດ
ແລ້ວ ແກະທຸກຝູງໄດ້ກິນນໍ້າໃນສ້າງບໍ່ນີ້ ຊຶ່ງມີຝາອັດເຮັດດ້ວຍຫີນກ້ອນໃຫຍ່. 3ເມື່ອແກະທຸກໆ
ຝູງໄດ້ມາໂຮມກັນຢູ່ທີ່ນັ້ນໝົດແລ້ວ ພວກລ້ຽງແກະຈະກິ້ງກ້ອນຫີນນັ້ນອອກຈາກປາກສ້າງ ແລ້ວ
ຕັກນໍ້າໃຫ້ແກະກິນ ຄັນແລ້ວກໍກິ້ງກ້ອນຫີນນັ້ນອັດປາກສ້າງໄວ້ຄືເກົ່າ.

4ຢາໂຄບຖາມພວກລ້ຽງແກະວ່າ, “ເພື່ອນເອີຍ ພວກເຈົ້າມາແຕ່ໃສ? ພວກເຮົາມາແຕ່ເມືອງ
ຮາຣານ.” 5ລາວຖາມອີກວ່າ, “ພວກເຈົ້າຮູ້ຈັກທ່ານລາບານ ຫລານຊາຍນາໂຮບໍ?” ພວກເຂົາ
ຕອບວ່າ, “ເອີ ພວກເຮົາຮູ້ຈັກເພິ່ນດີ.” 6ລາວຖາມອີກວ່າ, “ເພິ່ນຍັງຢູ່ສະບາຍດີບໍ?” ພວກເຂົາ
ຕອບວ່າ, “ຍັງຢູ່ສະບາຍດີ ຫັ້ນເດນາງຣາເຄນລູກສາວເພິ່ນກຳລັງຕ້ອນຝູງແກະມາ.” 7ຢາໂຄບ
ເວົ້າວ່າ, “ເວລານີ້ຍັງເວັນຢູ່ ແລະຍັງບໍ່ທັນແມ່ນຍາມນຳຝູງສັດກັບຄືນເມືອເທື່ອ ເປັນຫຍັງພວກ
ເຈົ້າຈຶ່ງບໍ່ເອົາສັດກິນນໍ້າເສຍກ່ອນແລ້ວຈຶ່ງເອົາໄປລ້ຽງອີກ?” 8ພວກເຂົາຈຶ່ງຕອບວ່າ, “ບໍ່ໄດ້ດອກ
ຕ້ອງລໍຖ້າຈົນແກະທຸກໆ ຝູງມາຮອດເສຍກ່ອນຈຶ່ງກິ້ງກ້ອນຫີນນັ້ນອອກ ແລ້ວເອົານໍ້າໃຫ້ແກະ
ກິນ.”

9ໃນເວລາທີ່ຢາໂຄບກຳລັງຢືນເວົ້າກັບພວກລ້ຽງແກະຢູ່ນັ້ນ ນາງຣາເຄນຊຶ່ງເປັນຜູ້ລ້ຽງແກະ
ຂອງພໍ່ລາວ ກໍໄດ້ພາຝູງແກະມາຮອດນໍ້າສ້າງ 10ພໍຢາໂຄບເຫັນຣາເຄນພ້ອມທັງຝູງແກະ ລາວ
ຈຶ່ງໄປທີ່ນໍ້າສ້າງ ແລ້ວກິ້ງກ້ອນຫີນນັ້ນອອກ ແລ້ວເອົານໍ້າໃຫ້ສັດກິນ. 11ຄັນແລ້ວ ລາວຈຶ່ງຈູບ
ນາງພ້ອມທັງຮ້ອງໄຫ້. 12ລາວເວົ້າຕໍ່ນາງວ່າ, “ຂ້ອຍແມ່ນລູກຊາຍຂອງນາງເຣເບກາ ແລະເປັນ
ພີ່ນ້ອງກັນກັບພໍ່ເຈົ້າ” ດັ່ງນັ້ນ ນາງຣາເຄນຈຶ່ງຟ້າວແລ່ນໄປບອກພໍ່. 13ເມື່ອລາບານໄດ້ຍິນຂ່າວ
ກ່ຽວກັບຢາໂຄບຫລານຊາຍຂອງຕົນ ກໍຟ້າວແລ່ນອອກໄປພົບ ແລະກອດຈູບລາວ ເພິ່ນພາ
ລາວເຂົ້າໄປໃນເຮືອນ ແລ້ວຢາໂຄບກໍໄດ້ເລົ່າເຫດການທຸກໆ ຢ່າງທີ່ເກີດຂຶ້ນກັບຕົນໃຫ້ແກ່ລຸງ
ຟັງ. 14ລາບານເວົ້າກັບຫລານຊາຍວ່າ, “ຖືກແລ້ວ ເຈົ້າແມ່ນເລືອດເນື້ອເຊື້ອໄຂຂອງຂ້ອຍແທ້”
ຢາໂຄບໄດ້ອາໄສຢູ່ນຳລາບານໜຶ່ງເດືອນ.

## ຢາໂຄບຮັບໃຊ້ລາບານເພາະຢາກໄດ້ ນາງຣາເຄນ

15ຢູ່ມາ ລາບານເວົ້າກັບຢາໂຄບວ່າ, “ພວກເຮົາເປັນພີ່ນ້ອງກັນກໍຈິງ ແຕ່ການເຮັດວຽກເຮັດ
ການນັ້ນຕ້ອງມີຄ່າຈ້າງລາງວັນ ເຈົ້າບໍ່ຕ້ອງເຮັດວຽກໃຫ້ຂ້ອຍລ້າໆດອກ ເຈົ້າຕ້ອງການຄ່າຈ້າງ
ເທົ່າໃດ?” 16ລາບານມີລູກສາວຢູ່ສອງຄົນ ຜູ້ກົກມີຊື່ວ່ານາງເລອາ ແລະຜູ້ນ້ອງມີຊື່ວ່ານາງຣາ-
ເຄນ. 17ນາງເລອາເປັນຄົນບໍ່ງາມ ສ່ວນນາງຣາເຄນນັ້ນເປັນຄົນງາມຫລາຍຢາໂຄບຮັກນາງ
ຣາເຄນ. 18ດັ່ງນັ້ນ ລາວຈຶ່ງເວົ້າວ່າ, “ຂ້ອຍຈະເຮັດວຽກໃຫ້ລຸງຢູ່ເຈັດປີ ເພື່ອແລກເອົາກັບນາງ
ຣາເຄນລູກສາວຜູ້ນ້ອຍຂອງລຸງ.” 19ລາບານເວົ້າວ່າ, “ຂ້ອຍຍິນດີມອບນາງໃຫ້ເຈົ້າດີກວ່າຈະ
ມອບໃຫ້ຄົນອື່ນ ຈົ່ງຢູ່ນຳຂ້ອຍສາ.” 20ຢາໂຄບໄດ້ເຮັດວຽກການຢູ່ເຈັດປີເພື່ອຈະແລກເອົາກັບ
ນາງຣາເຄນ ແຕ່ເວລາຜ່ານໄປເໝືອນດັ່ງສອງສາມມື້ເທົ່ານັ້ນຍ້ອນວ່າ ລາວຮັກນາງຫລາຍ.

21ຢາໂຄບເວົ້າຕໍ່ລາບານວ່າ, “ເວລາທີ່ກຳນົດໄວ້ກໍຄົບແລ້ວ ຈົ່ງໃຫ້ຂ້ອຍແຕ່ງງານກັບນາງ
ຣາເຄນສາ.” 22ດັ່ງນັ້ນລາບານຈຶ່ງຕົກລົງແລ້ວຈັດພິທີແຕ່ງງານໃຫ້ ແລະໄດ້ເຊື້ອເຊີນພວກ
ເພື່ອນບ້ານ ແລະມິດສະຫາຍມາຮ່ວມ. 23ແຕ່ວ່າໃນຄືນນັ້ນ ລາບານໄດ້ເອົານາງເລອາໄປໃຫ້

ຢາໂຄບ ແທນທີ່ຈະແມ່ນຣາເຄນ ສ່ວນຢາໂຄບກໍໄດ້ສົມສູ່ຢູ່ຮ່ວມກັບນາງໂດຍບໍ່ໄດ້ຮູ້ສຶກຕົວ.
24ລາບານໄດ້ມອບນາງຊິລະປາຂ້າໃຊ້ຂອງເພິ່ນ ໃຫ້ເປັນຂ້າໃຊ້ຂອງນາງເລອາ.

25ເມື່ອຕອນເຊົ້າຢາໂຄບຈຶ່ງພົບວ່າ ຜູ້ທີ່ຕົນແຕ່ງງານແລ້ວນັ້ນແມ່ນນາງເລອາລາວຈຶ່ງເວົ້າຕໍ່
ລາບານວ່າ, “ເປັນຫຍັງເຈົ້າຈຶ່ງເຮັດແບບນີ້ກັບຂ້ອຍ? ຂ້ອຍໄດ້ເຮັດວຽກໃຫ້ເຈົ້າຈົນເຖິງເຈັດປີ
ເພື່ອຈະໄດ້ກັບນາງຣາເຄນ ແຕ່ແລ້ວເປັນຫຍັງເຈົ້າຈຶ່ງຫລອກລວງຂ້ອຍ?” 26ລາບານຕອບວ່າ
“ກໍເພາະວ່າບໍ່ແມ່ນທຳນຽມຂອງເມືອງນີ້ ທີ່ຈະໃຫ້ນ້ອງສາວໄດ້ແຕ່ງງານກ່ອນເອື້ອຍ. 27ໃຫ້ເຈົ້າ
ລໍຖ້າການແຕ່ງງານນີ້ໄປຈົນໝົດອາທິດໜຶ່ງກ່ອນ ແລ້ວຂ້ອຍຈຶ່ງຈະມອບນາງຣາເຄນໃຫ້ເຈົ້າ
ຖ້າເຈົ້າຫາກຕົກລົງເຮັດວຽກໃຫ້ຂ້ອຍຕື່ມອີກເຈັດປີ.”

28ຢາໂຄບກໍຕົກລົງ ເມື່ອໄດ້ອາທິດໜຶ່ງແລ້ວ ລາບານຈຶ່ງໄດ້ມອບນາງຣາເຄນໃຫ້ເປັນເມຍ.
29ລາບານໄດ້ມອບນາງບິນຮາຂ້າໃຊ້ຂອງເພິ່ນໃຫ້ເປັນຂ້າໃຊ້ຂອງນາງຣາເຄນ. 30ດັ່ງນັ້ນ ຢາ-
ໂຄບຈຶ່ງໄດ້ສົມສູ່ຢູ່ຮ່ວມກັບນາງຣາເຄນອີກ ແລະລາວຮັກນາງຫລາຍກວ່ານາງເລອາ ລາວໄດ້
ເຮັດວຽກໃຫ້ແກ່ລາບານ ອີກເຈັດປີເຕັມຕາມສັນຍາ.

## ລູກຂອງຢາໂຄບ

31ເມື່ອອົງພຣະຜູ້ເປັນເຈົ້າຊົງເຫັນວ່າຢາໂຄບບໍ່ຮັກນາງເລອາ ພຣະອົງຈຶ່ງຊົງເຮັດໃຫ້ນາງມີ
ລູກ ສ່ວນນາຣາເຄນນັ້ນບໍ່ໃຫ້ມີ. 32ນາງເລອາຖືພາແລ້ວເກີດລູກຊາຍຜູ້ໜຶ່ງ ນາງເວົ້າວ່າ, “ອົງ
ພຣະຜູ້ເປັນເຈົ້າໄດ້ຊົງເຫັນຄວາມອຸກອັ່ງຂອງຂ້ານ້ອຍ ແລະບັດນີ້ຜົວຄົງຈະຮັກຂ້ານ້ອຍ” ດັ່ງ-
ນັ້ນນາງຈຶ່ງໄດ້ຕັ້ງຊື່ເດັກນ້ອຍນັ້ນວ່າຣູເບັນ.

33ຕໍ່ມາ ນາງໄດ້ຖືພາແລ້ວອອກລູກອີກ ນາງເວົ້າວ່າ, “ອົງພຣະຜູ້ເປັນເຈົ້າໄດ້ຊົງປະທານລູກ
ຊາຍໃຫ້ຂ້ານ້ອຍ ກໍຍ້ອນພຣະອົງໄດ້ຍິນວ່າຜົວບໍ່ຮັກຂ້ານ້ອຍ” ດັ່ງນັ້ນ ນາງຈຶ່ງໃສ່ຊື່ເດັກນ້ອຍ
ນັ້ນວ່າຊີເມໂອນ.

34ຢູ່ມາ ນາງຖືພາອີກ ແລະອອກລູກຊາຍຜູ້ໃໝ່ຕື່ມ ນາງເວົ້າວ່າ, “ບັດນີ້ຜົວຕ້ອງຕິດພັນຢູ່
ກັບຂ້ອຍ ກໍເພາະວ່າຂ້ອຍໄດ້ລູກຊາຍຢູ່ກັບເພິ່ນສາມຄົນແລ້ວ” ດັ່ງນັ້ນນາງຈຶ່ງໃສ່ຊື່ເດັກນ້ອຍ
ນັ້ນວ່າ ເລວີ.

35ຕໍ່ມາອີກ ນາງຖືພາ ແລະອອກລູກຊາຍຕື່ມອີກ ນາງເວົ້າວ່າ, “ເທື່ອນີ້ຂ້ອຍຈະສັນລະເສີນ
ພຣະຜູ້ເປັນເຈົ້າ” ສະນັ້ນ ນາງຈຶ່ງໃສ່ຊື່ເດັກນ້ອຍນັ້ນວ່າຢູດາ ແຕ່ນັ້ນຕໍ່ມານາງກໍບໍ່ມີລູກອີກ
ເລີຍ.

# ບົດທີ 30

1ເມື່ອນາງຣາເຄນເຫັນວ່າຕົນບໍ່ມີລູກໃຫ້ແກ່ຢາໂຄບ ນາງຈຶ່ງເກີດມີຄວາມອິດສາເອື້ອຍ ນາງ
ເວົ້າຕໍ່ຢາໂຄບວ່າ, “ຈະໃຫ້ຂ້ອຍມີລູກຫລືຈະໃຫ້ຂ້ອຍຕາຍ.” 2ຢາໂຄບຮ້າຍນາງ ແລະເວົ້າວ່າ,
“ຂ້ອຍບໍ່ມີອຳນາດດັ່ງພຣະເຈົ້າ ມີແຕ່ພຣະອົງດຽວເທົ່ານັ້ນທີ່ສາມາດໃຫ້ເຈົ້າມີລູກໄດ້.” 3ນາງ
ເວົ້າວ່າ, “ນາງບິນຮາຂ້າໃຊ້ສາວຂອງຂ້ອຍກໍຢູ່ນີ້ ໃຫ້ເຈົ້າສົມສູ່ຮ່ວມກັບນາງເສຍ ດ້ວຍວິທີນີ້
ຂ້ອຍຈະໄດ້ເປັນແມ່ຂອງເດັກທີ່ເກີດມາຈາກນາງ”

4ດັ່ງນັ້ນ ຣາເຄນຈຶ່ງເອົານາງບິນຮາຂ້າໃຊ້ສາວຂອງຕົນໃຫ້ແກ່ຜົວ ແລະເພິ່ນກໍໄດ້ສົມສູ່ກັບ
ນາງ 5-6ນາງບິນຮາໄດ້ຖືພາແລະໄດ້ເກີດລູກຊາຍຜູ້ໜຶ່ງ ເມື່ອເປັນເຊັ່ນນີ້ ນາງຣາເຄນກໍເວົ້າ
ວ່າ, “ພຣະເຈົ້າຊົງໃຫ້ຄວາມຍຸດຕິທຳແກ່ຂ້ານ້ອຍແລ້ວ ພຣະອົງຊົງໄດ້ຍິນຄວາມອ້ອນວອນ
ຂອງຂ້ານ້ອຍ ຈຶ່ງໄດ້ປະທານລູກຊາຍໃຫ້” ນາງໃສ່ຊື່ເດັກນ້ອຍນັ້ນວ່າ ດານ.

7ຕໍ່ມາສາວໃຊ້ນາງຣາເຄນໄດ້ຖືພາອີກ ແລະໄດ້ເກີດລູກຊາຍຜູ້ທີສອງກັບຢາໂຄບ. 8ນາງ
ຣາເຄນເວົ້າວ່າ, “ຂ້ອຍພະຍາຍາມເອົາຊະນະເອື້ອຍຂ້ອຍດ້ວຍການຕໍ່ສູ້ອັນລຳບາກ ໃນທີ່ສຸດ
ຂ້ອຍກໍເປັນຜູ້ມີໄຊ” ນາງຣາເຄນໄດ້ໃສ່ຊື່ເດັກນັ້ນວ່າ ນັບທາລີ.

9ເມື່ອນາງເລອາເຫັນວ່າຕົນບໍ່ມີລູກອີກ ຈຶ່ງເອົານາງຊີລະປາຂ້າໃຊ້ສາວໃຫ້ເປັນເມຍຂອງ
ຢາໂຄບ. 10ຄັນຕໍ່ມາ ນາງຊີລະປາກໍມີລູກຊາຍຜູ້ໜຶ່ງ 11ນາງເລອາຈຶ່ງເວົ້າວ່າ, “ຂ້ອຍໄດ້ຮັບ
ໂຊກດີ.” ສະນັ້ນ ນາງຈຶ່ງໃສ່ຊື່ເດັກນັ້ນວ່າ ກາດ

12-13ນາງຊີລະປາໄດ້ເກີດລູກຊາຍຜູ້ທີສອງອີກ ນາງເລອາຈຶ່ງເວົ້າວ່າ, “ຂ້ອຍຊ່າງມີຄວາມ
ຍິນດີຫລາຍແທ້ ແລະບັດນີ້ພວກຜູ້ຍິງທັງຫລາຍຈະເອີ້ນຂ້ອຍວ່າຜູ້ມີຄວາມຍິນດີ” ນາງໄດ້ໃສ່ຊື່
ເດັກນັ້ນວ່າອາເຊ.

14ຄັນມາເຖິງລະດູກ່ຽວເຂົ້າ ຣູເບັນໄດ້ໄປທ່ຽວຕາມທົ່ງນາ ແລະໄດ້ພົບໝາກເຂືອຊະນິດໜຶ່ງ
ລາວເອົາໝາກເຂືອນັ້ນມາໃຫ້ນາງເລອາຜູ້ເປັນແມ່ ນາງຣາເຄນເວົ້າກັບນາງເລອາວ່າ, “ຂ້ອຍ
ຂໍໝາກເຂືອຂອງລູກຊາຍເຈົ້າຈັກໜ່ອຍແດ່.” 15ນາງເລອາເລີຍຕອບວ່າ, “ເຈົ້າເອົາຜົວຂ້ອຍໄປ
ແລ້ວຍັງບໍ່ພໍຫລື? ບັດນີ້ເຈົ້າຍັງພະຍາຍາມເອົາໝາກເຂືອຂອງລູກຊາຍໄປອີກ” ນາງຣາເຄນ
ເວົ້າວ່າ, “ຖ້າເຈົ້າຫາກເອົາໝາກເຂືອໃຫ້ຂ້ອຍ ຄືນມື້ແລງນີ້ ຂ້ອຍຈະໃຫ້ຢາໂຄບໄປນອນນຳ
ເຈົ້າ.” 16ຕອນແລງ ເມື່ອຢາໂຄບກັບມາແຕ່ທົ່ງນາ ນາງເລອາກໍແລ່ນອອກໄປຫາ ແລະເວົ້າ
ວ່າ, “ຄືນນີ້ເຈົ້າຕ້ອງມານອນນຳຂ້ອຍ ເພາະວ່າຂ້ອຍໄດ້ຊື້ເຈົ້າດ້ວຍໝາກເຂືອຂອງລູກຊາຍ
ຂ້ອຍ” ໃນຄືນນັ້ນລາວຈຶ່ງສົມສູ່ຮ່ວມກັບນາງ. 17ພຣະເຈົ້າຊົງຕອບຄຳອ້ອນວອນຂອງນາງເລ-
ອາ ນາງໄດ້ຖືພາ ແລະເກີດລູກຊາຍຜູ້ທີຫ້າ. 18ນາງເລອາເວົ້າວ່າ, “ພຣະເຈົ້າໄດ້ປະທານບຳ-
ເໜັດໃຫ້ຂ້ານ້ອຍກໍຍ້ອນວ່າ ຂ້ານ້ອຍໄດ້ເອົາສາວໃຊ້ໃຫ້ເປັນເມຍຂອງຜົວຂ້ານ້ອຍ.” ດັ່ງນັ້ນ
ນາງຈຶ່ງໃສ່ຊື່ເດັກນັ້ນວ່າ ອິດຊາຄາ

19ຕໍ່ມານາງເລອາຖືພາອີກ ແລະເກີດລູກຊາຍຜູ້ທີຫົກ. 20ນາງເວົ້າວ່າ, “ພຣະເຈົ້າໄດ້ປະ-
ທານຂອງຂວັນຢ່າງດີໃຫ້ຂ້ານ້ອຍ ບັດນີ້ ຜົວຄົງຈະຮັກຂ້ານ້ອຍ ເພາະວ່າຂ້ານ້ອຍໄດ້ລູກກັບ
ລາວຕັ້ງຫົກຄົນແລ້ວ” ສັນນັ້ນ ນາງຈຶ່ງຕັ້ງຊື່ເດັກນີ້ວ່າ ເຊບູລູນ.”

21ຄັນຕໍ່ມາ ນາງກໍມີລູກສາວຜູ້ໜຶ່ງອີກ ລາວໃຫ້ຊື່ວ່າ ດີນາ.

22ແຕ່ເຖິງຢ່າງໃດກໍຕາມ ພຣະເຈົ້າຍັງຊົງບໍ່ຫລົງລືມນາງຣາເຄນ ພຣະອົງໄດ້ຊົງຕອບຄຳ
ອ້ອນວອນຂອງນາງ ແລະເຮັດໃຫ້ນາງມີລູກ. 23ນາງໄດ້ຖືພາ ແລະເກີດລູກຊາຍຜູ້ໜຶ່ງ ນາງ
ເວົ້າວ່າ, “ພຣະເຈົ້າຊົງໃຫ້ອະໄພຂ້ານ້ອຍໂດຍໃຫ້ຂ້ານ້ອຍມີລູກແລ້ວ. 24ຂໍພຣະຜູ້ເປັນເຈົ້າຊົງ
ປະທານຂ້ານ້ອຍມີລູກຜູ້ໃໝ່ອີກຖ້ອນ” ສະນັ້ນ ນາງຈຶ່ງໃຫ້ຊື່ເດັກນ້ອຍນັ້ນວ່າ ໂຢເຊັບ.

## ຢາໂຄບຂໍອຳລາຈາກລາບານ ຄືນສູ່ບ້ານພໍ່

25ຫລັງຈາກ ໂຢເຊັບ ໄດ້ເກີດແລ້ວ ຢາໂຄບ ກໍເວົ້າກັບ ລາບານ ວ່າ, “ຂໍພໍ່ຈົ່ງອະນຸຍາດໃຫ້ຂ້າ-
ນ້ອຍກັບເມືອບ້ານເກົ່າສາ. 26ຈົ່ງຍົກເມຍຊຶ່ງຂ້ານ້ອຍໄດ້ເຮັດວຽກແລກເອົານຳພໍ່ນັ້ນ ກັບລູກໃຫ້
ຂ້ານ້ອຍເອົາເມືອພ້ອມ ເພາະພໍ່ກໍຮູ້ຢູ່ແລ້ວວ່າຂ້ານ້ອຍໄດ້ເຮັດວຽກໃຫ້ພໍ່ນັ້ນດີສ່ຳໃດ

27ລາບານ ຕອບລາວວ່າ, “ພໍ່ກໍຢາກເວົ້ານຳລູກຄືກັນ ຄືວ່າພໍ່ໄດ້ດູນໍເບິ່ງແລ້ວ ແລະຮູ້ວ່າພໍ່ໄດ້
ຮັບພະພອນຈາກ ພຣະຜູ້ເປັນເຈົ້າ ກໍຍ້ອນ ເຈົ້າ. 28ຈົ່ງບອກຄ່າຈ້າງທີ່ເຈົ້າຕ້ອງການມາແລ້ວພໍ່ຈະ
ຈ່າຍໃຫ້.

29ຢາໂຄບ ຕອບ ລາບານ ວ່າ, “ຂ້ານ້ອຍໄດ້ເຮັດວຽກສ່ຳໃດ ແລະຝູງສັດທັງຫລາຍຂອງພໍ່ຢູ່
ກັບຂ້ານ້ອຍໄດ້ສ່ຳໃດ ພໍ່ກໍຮູ້ຢູ່ແລ້ວເພາະ. 30ເພາະວ່າກ່ອນຂ້ານ້ອຍມາ ພໍ່ມີສັດແຕ່ໜ້ອຍດຽວ
ແຕ່ບັດນີ້ ພໍ່ໄດ້ມີຂຶ້ນເປັນຈຳນວນຫລວງຫລາຍ ກໍເພາະຂ້ານ້ອຍ ພຣະຜູ້ເປັນເຈົ້າ ຈຶ່ງໄດ້ອວຍ-
ພອນພໍ່ ບັດນີ້ ກໍເປັນເວລາສົມຄວນແລ້ວທີ່ຂ້ານ້ອຍຈະມີຝູງສັດເປັນຂອງຕົນເອງ.”

31ລາບານ ຖາມວ່າ, “ຄັນຊັ້ນຈະໃຫ້ພໍ່ເອົາຫຍັງໃຫ້ເຈົ້າ?” ຢາໂຄບ ຕອບວ່າ, “ຂ້ານ້ອຍບໍ່
ຕ້ອງການຄ່າຈ້າງຫຍັງໝົດ ແຕ່ຖ້າພໍ່ຕົກລົງ ຂ້ານ້ອຍຈະເບິ່ງແຍງຝູງສັດຂອງພໍ່ຕໍ່ໄປ. 32ຄືມື້ນີ້
ຂ້ານ້ອຍຈະໄປກວດເບິ່ງຝູງສັດຂອງພໍ່ທັງໝົດ ແຍກລູກແກະສີດຳທຸກໆໂຕອອກ ແບ້ສີດ່າງ
ແລະມີຈຸດດ່າງທຸກໆ ໂຕອອກຈາກຝູງ ໃຫ້ເອົາສັດເຫລົ່ານີ້ແຫລະເປັນຄ່າຈ້າງຂອງຂ້ານ້ອຍ.
33ເມື່ອພໍ່ໄປຢ້ຽມຢາມ ແລະກວດເບິ່ງຝູງສັດຊຶ່ງເປັນຄ່າຈ້າງຂອງຂ້ານ້ອຍນີ້ ກໍຈະເຫັນຢ່າງແນ່-
ນອນວ່າ ຂ້ານ້ອຍມີຄວາມສັດຊື່ຫລືບໍ່ ຖ້າຂ້ານ້ອຍມີແບ້ທີ່ບໍ່ມີສີດ່າງ ຫລືມີຈຸດດ່າງ ແລະມີແກະ
ທີ່ບໍ່ແມ່ນສີດຳກໍສະແດງວ່າສັດເຫລົ່ານັ້ນຖືກລັກຂອງພໍ່ມາ. 34ລາບານ ຕອບວ່າ, “ດີແລ້ວ ເຮົາ
ຈະເຮັດດັ່ງທີ່ເຈົ້າໄດ້ເວົ້າມາ.”

35ໃນມື້ນັ້ນ ລາບານ ໄດ້ຄັດເລືອກເອົາແບ້ເຖິກແລະແບ້ແມ່ສີລາຍສີດ່າງ ແລະລູກແບ້ສີດຳໃນ
ຝູງອອກມາມອບໃຫ້ລູກເຂີຍຂອງ ເພິ່ນ ເປັນຜູ້ເບິ່ງແຍງ. 36ຄັນ ແລ້ວ ເພິ່ນພ້ອມຝູງແບ້ທີ່ແຍກ
ອອກຈຶ່ງໜີໄປໄກຈາກ ຢາໂຄບ ເປັນໄລຍະທາງຍ່າງເຖິງສາມມື້ ສ່ວນຝູງແກະທີ່ເຫລືອຈາກ ລາ-
ບານ ນັ້ນ ຢາໂຄບ ເປັນຜູ້ລ້ຽງໄວ້.

37ຢາໂຄບ ໄດ້ເອົາງ່າໄມ້ເປັນຈາກຕົ້ນຈັນປ່າ ຕົ້ນໝາກບົກ ແລະຕົ້ນຫູກວາງ ແລ້ວປອກ
ເປືອກງ່າໄມ້ບາງບ່ອນໃຫ້ເປັນລາຍ. 38ລາວໄດ້ເອົາງ່າໄມ້ນັ້ນໄປວາງໄວ້ຕໍ່ໜ້າອ່າງບ່ອນສັດໄປ
ກິນນ້ຳ ເພື່ອໃຫ້ເກີດຜົນສະທ້ອນເວລາສັດປະສົມພັນ. 39ດັ່ງນັ້ນ ເມື່ອຝູງແກະ ແລະແບ້ປະສົມ
ພັນຕໍ່ໜ້າງ່າໄມ້ກໍຈະອອກລູກເປັນສີດ່າງດາວ. 40ຢາໂຄບ ໄດ້ເອົາລູກແບ້ທີ່ອອກໃໝ່ໄປໄວ້ຕ່າງ-
ຫາກ ແລະເອົາໂຕແມ່ສີດ່າງດາວແລະດຳທີ່ ລາບານ ໃຫ້ນັ້ນ ໄປໄວ້ຕ່າງຫາກ ດ້ວຍວິທີນີ້ລາວ
ຈຶ່ງ ສາມາດ ຜະລິດ ແກະ ເປັນ ຂອງ ຕົນ ເອງ ໄດ້ ແລະ ບໍ່ ເອົາ ໄປ ປະ ປົນ ກັບ ຝູງ ແກະ ຂອງ ລາບານ.
41ເມື່ອສັດຕົວພີປະສົມພັນ ຢາໂຄບ ຈຶ່ງ ເອົາງ່າໄມ້ລາຍວາງໄວ້ຕໍ່ໜ້າອ່າງບ່ອນສັດມາກິນນ້ຳ ເພື່ອ
ວ່າສັດເຫລົ່ານັ້ນຈະເກີດລູກອອກມາເປັນສີຄືງ່າໄມ້. 42ແຕ່ສ່ວນສັດທີ່ຈ່ອຍບໍ່ມີແຮງ ຢາໂຄບ ບໍ່
ໄດ້ເອົາງ່າໄມ້ໃສ່ໄວ້ ດັ່ງນັ້ນ ສັດທີ່ແຂງແຮງຈຶ່ງເປັນຂອງ ຢາໂຄບ ແລະສັດທີ່ບໍ່ແຂງແຮງເປັນ
ຂອງ ລາບານ 43ຕໍ່ມາອີກບໍ່ດົນ ຢາໂຄບ ກໍກາຍເປັນຄົນຮັ່ງມີ ລາວມີແກະຫລາຍຝູງ ມີຝູງອູດ ມີ

ຝູງລໍ ແລະຂ້າໃຊ້ຊາຍຍິງຢ່າງຫລວງຫລາຍ.

# ບົດທີ 31

## ຢາໂຄບຫລົບໜີຈາກລາບານ

1ຢາໂຄບ ໄດ້ຍິນພວກລູກຊາຍຂອງ ລາບານ ເວົ້າວ່າ, "ຢາໂຄບ ໄດ້ເອົາຊັບສົມບັດຂອງພໍ່ເຮົາ
ທຸກສິ່ງທີ່ລາວມີນັ້ນ ແມ່ນມາຈາກພໍ່ຂອງ ເຮົາໝົດ. 2ຢາໂຄບ ໄດ້ເຫັນວ່າທ່າທີຂອງ ລາບານ ທີ່ມີຕໍ່
ລາວນັ້ນບໍ່ດີຄືແຕ່ກ່ອນ.
3ຄັນຕໍ່ມາ ພຣະຜູ້ເປັນເຈົ້າ ໄດ້ກ່າວຕໍ່ລາວວ່າ, "ຈົ່ງກັບຄືນເມືອສູ່ດິນແດນບັນພະບູລຸດ ແລະ
ຍາດພີ່ນ້ອງຂອງເຈົ້າ ເຮົາຈະຢູ່ກັບເຈົ້າ." 4ດັ່ງນັ້ນ ຢາໂຄບ ຈຶ່ງສັ່ງຄວາມໄປຫານາງ ຣາເຄນ
ແລະນາງ ເລອາ ໃຫ້ມາຫາຢູ່ທີ່ທົ່ງລ້ຽງສັດ. 5ລາວເວົ້າຕໍ່ເມຍວ່າ, "ອ້າຍສັງເກດເຫັນວ່າ ພໍ່ຂອງ
ພວກນ້ອງມີທ່າທີບໍ່ຄືແຕ່ກ່ອນຕໍ່ອ້າຍ ແຕ່ວ່າ ພຣະເຈົ້າ ຂອງພໍ່ອ້າຍໄດ້ສະຖິດຢູ່ນຳອ້າຍ 6ພວກ
ນ້ອງທັງສອງກໍຮູ້ແລ້ວວ່າ ອ້າຍໄດ້ເຮັດວຽກໃຫ້ເພິ່ນເຕັມກຳລັງ. 7ນອກໄປຈາກນີ້ ເພິ່ນຍັງໂກງ
ອ້າຍ ແລະປ່ຽນຄ່າຈ້າງເຖິງສິບເທື່ອ ແຕ່ວ່າ ພຣະເຈົ້າ ບໍ່ຊົງອະນຸຍາດໃຫ້ເພິ່ນທຳລາຍອ້າຍ.
8ເມື່ອເວລາພໍ່ຂອງພວກນ້ອງເວົ້າວ່າ ແບ້ທີ່ມີຂົນເປັນຈຸດຈະເປັນຄ່າຈ້າງລາງວັນຂອງອ້າຍ ແບ້
ທັງໝົດກໍອອກລູກເປັນຂົນກ່ານທຸກໂຕ. 9ພຣະເຈົ້າ ໄດ້ປະທານຝູງສັດຂອງພໍ່ພວກນ້ອງໃຫ້ອ້າຍ.
10ຍາມສັດຖືເຊີງ ອ້າຍໄດ້ຝັນເຫັນວ່າແບ້ເຖິກທີ່ຖືເຊີງນັ້ນມີຂົນເປັນຈຸດດ່າງ. 11ທູດຂອງ
ພຣະເຈົ້າ ໄດ້ກ່າວຕໍ່ອ້າຍວ່າ, ຢາໂຄບ ເອີຍ ອ້າຍຕອບວ່າ ໂດຍຂ້ານ້ອຍ. 12ທູດ ພຣະເຈົ້າ ເວົ້າຕໍ່
ໄປວ່າ ຈົ່ງເບິ່ງພຸ້ນດູ ແບ້ເຖິກທີ່ຖືເຊີງນັ້ນມີຂົນເປັນຈຸດດ່າງ ເຮົາຮູ້ຈັກທຸກຢ່າງທີ່ ລາບານ ກຳລັງ
ກະທຳຕໍ່ເຈົ້າ. 13ເຮົາແມ່ນ ພຣະເຈົ້າ ຜູ້ໄດ້ປະກົດໃຫ້ເຈົ້າເຫັນທີ່ ເບັດເອນ ບ່ອນເຈົ້າໄດ້ຖວາຍເສົາ
ອະນຸສອນພ້ອມກັບນ້ຳມັນຫອມ ແລະສາບານໄວ້ ບັດນີ້ ຈົ່ງຕຽມຕົວອອກໜີຈາກແຜ່ນດິນນີ້
ແລະກັບຄືນສູ່ບ້ານເກີດຂອງເຈົ້າ."
14ນາງ ຣາເຄນ ແລະນາງ ເລອາ ຕອບ ຢາໂຄບ ວ່າ, "ບໍ່ມີມູນມໍລະດົກຫຍັງທີ່ເຫລືອຢູ່ໃນເຮືອນ
ພໍ່. 15ສຳລັບພວກເຮົາບໍ່ແມ່ນເພິ່ນຖືພວກເຮົາຄືຄົນອື່ນບໍ? ເພິ່ນຂາຍພວກເຮົາ ແລະດຽວນີ້ເພິ່ນກໍ
ຈ່າຍເງິນນັ້ນໝົດແລ້ວ 16ຊັບສົມບັດທຸກຢ່າງທີ່ ພຣະເຈົ້າ ຊົງ ເອົາມາຈາກພໍ່ຂອງພວກເຮົາ ກໍ
ກາຍເປັນຂອງພວກເຮົາ ແລະລູກຂອງເຮົາໝົດແລ້ວ ຈົ່ງເຮັດຕາມທີ່ ພຣະເຈົ້າ ໄດ້ບອກອ້າຍ."
17-18ດັ່ງນັ້ນ ຢາໂຄບ ຈຶ່ງຕຽມພ້ອມແລ້ວເອົາລູກເອົາເມຍຂຶ້ນຂີ່ຫລັງອູດ ຮິບໂຮມເອົາສິ່ງຂອງ
ທຸກສິ່ງທຸກຢ່າງ ທີ່ໄດ້ໃນປະເທດ ເມໂຊໂປຕາເມຍ ແລະປ້ອງຝູງສັດອອກນຳໜ້າ ເດີນທາງຄືນ
ເມືອຫາພໍ່ຂອງຕົນທີ່ ການາອານ.
19ສ່ວນ ລາບານ ກໍອອກໄປແຖຂົນແກະ ໃນຂະນະທີ່ເພິ່ນບໍ່ຢູ່ ນາງ ຣາເຄນ ໄດ້ລັກເອົາຮູບ
ເຄົາລົບປະຈຳເຮືອນຂອງພໍ່ໄປນຳ. 20ຢາໂຄບ ໄດ້ລວງ ລາບານ ຊາວ ອາຣາມ ໂດຍບໍ່ໄດ້ບອກ
ໃຫ້ຮູ້ເຖິງການຈາກໄປ. 21ລາວໄດ້ເອົາຊັບສົມບັດທັງໝົດໜີຂ້າມແມ່ນ້ຳ ເອຟຣາດ ມຸ່ງໜ້າໄປສູ່
ພູເຂົາ ກີເລອາດ.

## ລາບານໄລ່ຕິດຕາມຢາໂຄບ

22-23ສາມມື້ຕໍ່ມາ ລາບານຈຶ່ງຮູ້ວ່າຢາໂຄບໄດ້ໜີໄປແລ້ວ ເພິ່ນຈຶ່ງພາຄົນໄລ່ຕິດຕາມຢາໂຄບ
ເປັນເວລາເຈັດມື້ຈຶ່ງທັນລາວທີ່ພູກີເລອາດ. 24ໃນຄືນນັ້ນ ພຣະເຈົ້າຊົງປະກົດໃນຄວາມຝັນຂອງ
ລາບານຊາວອາຣາມ ແລະຊົງກ່າວຕໍ່ເພິ່ນວ່າ, “ຈົ່ງລະວັງ! ຢ່າມາຂູ່ຢາໂຄບເລີຍ.”

25ລາບານທັນຢາໂຄບທີ່ພູກີເລອາດ ບ່ອນລາວຕັ້ງຄ້າຍພັກຢູ່ ແລະລາບານກໍຕັ້ງທີ່ພັກຢູ່
ເທິງພູນັ້ນ. 26ລາບານໄດ້ເວົ້າກັບຢາໂຄບວ່າ, “ເປັນຫຍັງເຈົ້າຈຶ່ງລວງຂ້ອຍ ແລະພາລູກສາວ
ຂ້ອຍໜີມາຄືກັບຜູ້ຍິງຊະເລີຍເສິກ? 27ເປັນຫຍັງເຈົ້າຈຶ່ງລວງຂ້ອຍ ແລະປົບໜີໂດຍບໍ່ຄອບ? ຖ້າ
ເຈົ້າບອກ ຂ້ອຍກໍຈະໄປສົ່ງເຖິງທາງດ້ວຍຄວາມຍິນດີ ໂດຍໃຫ້ມີຂະບວນແຫ່ທັງດົນຕີຄື ສຽງ
ກອງ ສຽງພິນແລະສຽງຮ້ອງລຳທຳເພງ. 28ອັນນີ້ເຈົ້າບໍ່ໃຫ້ຂ້ອຍຈູບສັ່ງລາລູກສາວ ແລະ
ຫລານໆ ຂ້ອຍເລີຍ ເປັນຫຍັງຈຶ່ງເຮັດແບບໂງ່ໆເຊັ່ນນີ້? 29ຂ້ອຍມີສິດທີ່ຈະລົງໂທດເຈົ້າ ແຕ່
ຄືນນີ້ພຣະເຈົ້າແຫ່ງບັນພະບູລຸດຂອງເຈົ້າໄດ້ບອກບໍ່ໃຫ້ຂ້ອຍຂູ່ເຈົ້າ. 30ຂ້ອຍຮູ້ວ່າເຈົ້າປົບໜີກໍ
ເພາະວ່າເຈົ້າຢາກກັບເມືອບ້ານແຮງ ແຕ່ວ່າເປັນຫຍັງເຈົ້າຈຶ່ງລັກເອົາຮູບພະຂ້ອຍໄປ?”

31ຢາໂຄບຕອບວ່າ, “ຂ້ານ້ອຍຢ້ານ ເພາະຄິດວ່າພໍ່ອາດຈະເອົາລູກສາວໜີໄປຈາກຂ້ານ້ອຍ.
32ແຕ່ຖ້າພໍ່ພົບຮູບພະຂອງພໍ່ຢູ່ນຳໃຜຈົ່ງຂ້າຜູ້ນັ້ນຖິ້ມໂລດ ຄົນຂອງເຮົາກໍຢູ່ນີ້ ເພື່ອເປັນພະຍານ
ຫລັກຖານ ຈົ່ງຫາຊອກຄົ້ນເອົາທຸກສິ່ງທີ່ເປັນຂອງພໍ່ໄປ” ຢາໂຄບບໍ່ຮູ້ວ່ານາງຣາເຄນໄດ້ລັກເອົາ
ຮູບພະນັ້ນມານຳ.

33ລາບານເຂົ້າໄປຄົ້ນໃນຜ້າເຕັນຂອງຢາໂຄບ ແລ້ວເຂົ້າໄປໃນຜ້າເຕັນຂອງເລອາ ແລະຜ້າ
ເຕັນຂອງຂ້າໃຊ້ຊາຍຍິງທັງໝົດ ແຕ່ບໍ່ພົບຮູບພະນັ້ນເລີຍ. ຄັນແລ້ວ ເພິ່ນຈຶ່ງເຂົ້າໄປໃນຜ້າເຕັນ
ຂອງນາງຣາເຄນ 34ນາງຣາເຄນໄດ້ເອົາຮູບເຄົາລົບປະຈຳເຮືອນເຫລົ່ານັ້ນ ເຊື່ອງໄວ້ໃນຖົງ
ອານເທິງຫລັງອູດແລ້ວນັ່ງຖົງນັ້ນໄວ້ ລາບານໄດ້ຊອກຄົ້ນເບິ່ງໝົດໃນຜ້າເຕັນ ແຕ່ກໍບໍ່ພົບຫຍັງ.
35ນາງຣາເຄນຈຶ່ງເວົ້າຕໍ່ພໍ່ຂອງນາງວ່າ, “ພໍ່ຢ່າຮ້າຍລູກເລີຍທີ່ລູກບໍ່ສາມາດລຸກຢືນຂຶ້ນໃນເວລາພໍ່
ມາ ກໍເພາະວ່າລູກເປັນປະຈຳເດືອນ” ລາບານຊອກຄົ້ນເບິ່ງໝົດທຸກບ່ອນ ແຕ່ວ່າບໍ່ພົບຮູບພະ
ນັ້ນເລີຍ.

36ສ່ວນຢາໂຄບອາລົມກໍບໍ່ຄ່ອຍດີ ເລີຍເວົ້າສຳນຽງຮ້າຍກັບລາບານວ່າ, “ຂ້ານ້ອຍໄດ້ກະທຳ
ຜິດຫຍັງ? ແລະໄດ້ລະເມີດກົດໝາຍຫຍັງທີ່ພາໃຫ້ພໍ່ຕ້ອງຕິດຕາມຂ້ານ້ອຍມາ? 37ບັດນີ້ ພໍ່ໄດ້
ຄົ້ນເບິ່ງໝົດແລ້ວສິ່ງຂອງໃນເຮືອນຂ້ານ້ອຍ ມີສິ່ງຂອງຫຍັງແດ່ທີ່ເຫັນວ່າເປັນຂອງພໍ່? ເອົາ
ອອກມາໃຫ້ຄົນຂອງພໍ່ ແລະຄົນຂອງຂ້ານ້ອຍເບິ່ງດຸ ແລະໃຫ້ເຂົາຕັດສິນຄວາມລະຫວ່າງເຮົາ
ທັງສອງ.

38ເປັນເວລາຊາວປີທີ່ຂ້ານ້ອຍຢູ່ນຳພໍ່ ແກະ ແລະແບ້ຂອງພໍ່ກໍອອກແມ່ແພ່ລູກຢູ່ບໍ່ຂາດ ແຕ່
ຂ້ານ້ອຍບໍ່ໄດ້ກິນແມ່ນແຕ່ແກະເຖິກໂຕດຽວໃນຝູງຂອງພໍ່. 39ເມື່ອແກະຕົວໜຶ່ງຖືກສັດປ່າກັດ
ຕາຍ ຂ້ານ້ອຍກໍບໍ່ໄດ້ເອົາມາໃຫ້ພໍ່ເບິ່ງ ແລະກໍບໍ່ແມ່ນຄວາມຜິດຂອງຂ້ານ້ອຍ ແຕ່ແມ່ນຂ້ານ້ອຍ
ທີ່ຈ່າຍຄ່າເສຍຫາຍ ພໍ່ຍັງທວງຖາມເອົານຳຂ້ານ້ອຍ ສິ່ງທີ່ຖືກລັກຍາມກາງຄືນ. 40ມີຫລາຍເທື່ອ
ທີ່ຂ້ານ້ອຍຕ້ອງທົນຕໍ່ຄວາມເຜົາຜານຂອງແສງແດດໃນເວລາກາງເວັນ ແລະຕໍ່ຄວາມໜາວກະ-

ດ້າງໃນເວລາກາງຄືນຈົນຂ້ານ້ອຍບໍ່ສາມາດນອນຕາຫລັບໄດ້. [41]ແມ່ນສິ່ງເຫລົ່ານີ້ແຫລະທີ່ຂ້າ-
ນ້ອຍໄດ້ອາໄສຢູ່ນຳພໍ່ຊາວປີ ຂ້ານ້ອຍໄດ້ເຮັດວຽກສິບສີ່ປີ ເພື່ອແລກເອົາກັບລູກສາວສອງຄົນ
ຂອງພໍ່ ແລະອີກຫົກປີເພື່ອມີຝູງສັດ ແລະເຖິງປານນັ້ນ ພໍ່ຍັງປ່ຽນຄ່າຈ້າງຂອງຂ້ານ້ອຍເຖິງສິບ
ເທື່ອ. [42]ຖ້າຫາກ ພຣະເຈົ້າ ອົງທີ່ ອິຊາກ ນະມັດສະການບໍ່ໄດ້ສະຖິດຢູ່ນຳຂ້ານ້ອຍ ປານນີ້ພໍ່ຄົງ
ໄລ່ຂ້ານ້ອຍໜີມືເປົ່າແລ້ວ ແຕ່ວ່າ ພຣະເຈົ້າ ໄດ້ເຫັນຄວາມທຸກ ແລະວຽກການທີ່ຂ້ານ້ອຍໄດ້ເຮັດ
ສະນັ້ນ ພຣະອົງຈຶ່ງຊົງຕັດສິນໃນຄືນນີ້."

## ຢາໂຄບແລະລາບານຕົກລົງກັນ

[43]ລາບານ ຕອບ ຢາໂຄບ ວ່າ, "ລູກສາວກໍແມ່ນຂອງຂ້ອຍ ເດັກນ້ອຍກໍແມ່ນຂອງຂ້ອຍ ແລະ
ຝູງສັດກໍແມ່ນຂອງຂ້ອຍ ທຸກສິ່ງທີ່ເຈົ້າເຫັນຢູ່ນີ້ກໍເປັນຂອງຂ້ອຍ ແຕ່ວ່າບັດນີ້ຂ້ອຍຈະເຮັດຫຍັງ
ເພື່ອລູກສາວ ແລະເພື່ອຫລານຂອງຂ້ອຍໄດ້? [44]ດີແລ້ວ ພວກເຮົາຈົ່ງພາກັນມາຕົກລົງກັນໂດຍ
ເອົາຫີນມາກອງໄວ້ ເພື່ອເຮັດເປັນອະນຸສອນລະຫວ່າງເຮົາທັງສອງ."

[45-46]ສະນັ້ນ ຢາໂຄບ ຈຶ່ງຕັ້ງເສົາຫີນອະນຸສອນເສົາໜຶ່ງຂຶ້ນ ແລ້ວຄົນຂອງລາວເອົາຫີນມາ
ກອງອ້ອມໄວ້ ຄັນແລ້ວ ພວກເຂົາທັງໝົດກໍພາກັນຮັບປະທານອາຫານໃກ້ໆ ກອງຫີນນັ້ນ.
[47]ລາບານ ໃຫ້ຊື່ກອງຫີນນັ້ນວ່າ ເຢກາ-ຊາຣາ-ດູທາ ຂະນະດຽວກັນຢາໂຄບກໍໃສ່ຊື່ກອງຫີນນັ້ນ
ວ່າ ກາເລເອັດ.

[48]ລາບານ ເວົ້າວ່າ, "ກອງຫີນນັ້ນຈະເປັນອະນຸສອນແຫ່ງການຕົກລົງລະຫວ່າງ ເຈົ້າ ແລະ
ຂ້ອຍ" ດ້ວຍເຫດນີ້ ບ່ອນນັ້ນຈຶ່ງມີຊື່ວ່າ ກາເລເອັດ. [49]ລາບານ ເວົ້າອີກວ່າ, "ຂໍ ພຣະຜູ້ເປັນເຈົ້າ
ຊົງເຝົ້າຄອຍເບິ່ງພວກເຮົາ ເວລາຫ່າງເຫີນຈາກກັນ" ດັ່ງນັ້ນ ບ່ອນນີ້ຈຶ່ງມີຊື່ອີກວ່າ ມິດຊະປາ.
[50]ລາບານ ເວົ້າຕໍ່ໄປວ່າ, "ຖ້າເຈົ້າຂົ່ມເຫັງລູກສາວຂ້ອຍ ຫລືຖ້າເຈົ້າແຕ່ງງານກັບຍິງອື່ນອີກ ເຖິງ
ແມ່ນວ່າຂ້ອຍບໍ່ຮູ້ຈັກເລື່ອງນັ້ນກໍຕາມ ຈົ່ງຈື່ໄວ້ວ່າ ພຣະເຈົ້າ ເປັນຜູ້ຄອຍເບິ່ງພວກເຮົາ."

[51]ລາບານ ເວົ້າຕໍ່ຢາໂຄບວ່າ "ອັນນີ້ ແມ່ນກອງຫີນທີ່ຂ້ອຍໄດ້ກອງຂຶ້ນລະຫວ່າງເຮົາທັງສອງ.
[52]ເສົາຫີນອະນຸສອນ ແລະກອງຫີນນີ້ຈະເປັນສັນຍາລັກວ່າ ຂ້ອຍຈະບໍ່ຂ້າມກອງຫີນນີ້ໄປບຸກ-
ໂຈມຕີເຈົ້າ ແລະເຈົ້າກໍຄືກັນ ຈະບໍ່ຂ້າມເສົາຫີນນີ້ມາບຸກໂຈມຕີຂ້ອຍ. [53]ພຣະເຈົ້າ ຂອງ ອັບຣາ-
ຮາມ ແລະ ພຣະເຈົ້າ ຂອງ ນາໂຮ ຈະເປັນຜູ້ຕັດສິນລະຫວ່າງພວກເຮົາ" ຄັນແລ້ວ ຢາໂຄບກໍສາ-
ບານໃນນາມຂອງ ພຣະເຈົ້າ ອົງທີ່ ອິຊາກ ພໍ່ຂອງຕົນ ໄດ້ນະມັດສະການ. [54]ຢາໂຄບ ໄດ້ຂ້າສັດ
ຖວາຍບູຊາຢູ່ເທິງພູ ແລະໄດ້ເຊື້ອເຊີນພີ່ນ້ອງຂອງຕົນມາຮ່ວມຮັບປະທານອາຫານ. ຫລັງຈາກ
ຮັບປະທານອາຫານແລ້ວ ພວກເຂົາກໍນອນຄ້າງຄືນຢູ່ທີ່ນັ້ນ.

[55]ແຕ່ເຊົ້າມືດ ຂອງມື້ໃໝ່ ລາບານໄດ້ຈູບລາລູກສາວ ແລະຫລານຂອງຕົນພ້ອມທັງອວຍ-
ພອນໃຫ້ແກ່ເຂົາ ແລ້ວກໍກັບຄືນເມືອບ້ານ.

# ບົດທີ 32

## ຢາໂຄບກະຕຽມເພື່ອໄປພົບເອຊາວ

[1]ຢາໂຄບ ໄດ້ເດີນທາງຕໍ່ໄປ ແລະທູດຂອງ ພຣະເຈົ້າ ໄດ້ມາພົບເພິ່ນ. [2]ເມື່ອເພິ່ນເຫັນທູດ

ເຫລົ່ານັ້ນ ຈຶ່ງກ່າວວ່າ, "ອັນນີ້ແມ່ນກອງທັບຂອງ ພຣະເຈົ້າ" ດັ່ງນັ້ນ ເພິ່ນຈຶ່ງໃສ່ຊື່ບ່ອນນັ້ນວ່າ
ມາຣານາຢິມ.

3ຢາໂຄບ ໄດ້ສົ່ງຄົນນຳຂ່າວຈຳນວນໜຶ່ງ ໄປບອກແກ່ ເອຊາວ ຜູ້ເປັນອ້າຍທີ່ເມືອງ ເສອີ ໃນປະ-
ເທດ ເອໂດມ. 4ເພິ່ນໄດ້ບອກແກ່ພວກນຳຂ່າວນັ້ນໄປເວົ້າຕໍ່ ເອຊາວ ດັ່ງນີ້ "ຢາໂຄບ ຂ້າໃຊ້ຜູ້ອ່ອນ
ນ້ອມຂອງທ່ານ ຊຶ່ງໄດ້ໄປອາໄສຢູ່ນຳ ລາບານ ແລະຫາກໍກັບມາດຽວນີ້ ຂໍລາຍງານຕໍ່ທ່ານວ່າ
5ຂ້ານ້ອຍມີຝູງງົວ ຝູງລໍ ຝູງແບ້ ແລະຝູງແກະ ພ້ອມທັງຂ້າໃຊ້ຊາຍຍິງຫລາຍຄົນໄດ້ມາຂໍຮ້ອງ
ຕໍ່ທ່ານ ໂດຍຫວັງວ່າຈະໄດ້ຮັບຄວາມເຫັນອົກເຫັນໃຈ."

6ເມື່ອຄົນນຳຂ່າວກັບຄືນມາ ພວກເຂົາໄດ້ເລົ່າໃຫ້ຢາໂຄບ ຟັງວ່າ, "ພວກຂ້ານ້ອຍໄດ້ໄປຫາ
ເອຊາວ ອ້າຍຂອງທ່ານແລ້ວ ເພິ່ນພວມອອກເດີນທາງມາພົບທ່ານພ້ອມທັງມີຄົນມານຳສີ່ຮ້ອຍ
ຄົນ." 7ຢາໂຄບ ມີຄວາມຢ້ານກົວຫລາຍຈົນອາລົມເສຍ ເພິ່ນໄດ້ແບ່ງຄົນພ້ອມທັງຝູງແກະ ຝູງ
ແບ້ ຝູງງົວ ແລະຝູງອູດອອກເປັນສອງໝູ່. 8ເພາະເພິ່ນຄິດວ່າ, "ຖ້າ ເອຊາວ ບຸກລຸກໂຈມຕີໝູ່ທີ
ໜຶ່ງ ອີກໝູ່ທີໜຶ່ງກໍອາດຈະສາມາດຫລົບໜີໄປໄດ້."

9ຄັນແລ້ວ ຢາໂຄບ ກໍອະທິຖານວ່າ, "ໂອ ພຣະເຈົ້າ ຂອງ ອັບຣາຮາມ ແລະຂອງ ອີຊາກ ຜູ້
ເປັນພໍ່ຕູ້ ແລະພໍ່ຂອງຂ້ານ້ອຍ ຂໍພຣະອົງຊົງຫງ່ຽງຫູຟັງຂ້ານ້ອຍແດ່ທ້ອນ ພຣະອົງຊົງບອກຂ້າ-
ນ້ອຍວ່າ ຈົ່ງກັບຄືນເມືອຫາຍາດຕິພີ່ນ້ອງຂອງເຈົ້າ ແລະເຮົາຈະໃຫ້ທຸກສິ່ງທຸກຢ່າງຜ່ານພົ້ນໄປ
ໂດຍດີສຳລັບເຈົ້າ. 10ຂ້ານ້ອຍບໍ່ຄູ່ຄວນກັບຄວາມກະລຸນາ ແລະຄວາມສັດຊື່ສຸດຈະລິດ ທີ່ພຣະ-
ອົງຊົງສຳແດງ ແກ່ຂ້ານ້ອຍຜູ້ເປັນຂ້າໃຊ້ຂອງພຣະອົງ ຂ້ານ້ອຍໄດ້ຂ້າມແມ່ນ້ຳຢໍແດນ ມີພຽງ
ໄມ້ເທົ້າເທົ່ານັ້ນ ແຕ່ບັດນີ້ຂ້ານ້ອຍໄດ້ກັບຄືນມາພ້ອມດ້ວຍຝູງຄົນ ແລະຝູງສັດສອງໝູ່ນີ້. 11ຂໍ
ພຣະອົງຊົງ ໂຜດຊ່ອຍໃຫ້ຂ້ານ້ອຍພົ້ນຈາກເງື້ອມມືຂອງອ້າຍ ເອຊາວ ແດ່ທ້ອນ ຂ້ານ້ອຍຢ້ານວ່າ
ລາວຈະເຂົ້າມາບຸກໂຈມຕີ ແລະທຳຮ້າຍພວກຂ້ານ້ອຍທັງໝົດ ທັງຜູ້ຍິງ ແລະເດັກນ້ອຍ. 12ຈົ່ງ
ຈື່ຈຳຄຳສັນຍາຂອງພຣະອົງດ້ວຍ ທີ່ວ່າເຮົາຈະເຮັດທຸກສິ່ງທຸກຢ່າງໃຫ້ຜ່ານພົ້ນໄປໂດຍດີສຳລັບ
ເຈົ້າ ແລະເຮົາຈະໃຫ້ເຈົ້າມີເຊື້ອສາຍຢ່າງຫລວງຫລາຍຈົນນັບບໍ່ໄດ້ ຄືກັບເມັດດິນຊາຍທີ່ແຄມ
ທະເລ."

13ຫລັງຈາກ ຢາໂຄບ ໄດ້ນອນຄ້າງຄືນທີ່ ມາຣານາຢິມ ແລ້ວເພິ່ນໄດ້ເລືອກເອົາສິ່ງຂອງທີ່
ເພິ່ນມີ ເພື່ອຈະໄດ້ມອບໃຫ້ແກ່ ເອຊາວ ຜູ້ເປັນອ້າຍ. 14ຄື ແບ້ແມ່ສອງຮ້ອຍໂຕ ແບ້ເຖິກຊາວໂຕ
ແກະແມ່ສອງຮ້ອຍໂຕແລະແກະຜູ້ຊາວໂຕ. 15ໂຕອູດແມ່ກັບລູກທີ່ຍັງກິນນົມຢູ່ສາມສິບໂຕ ງົວ
ແມ່ສີ່ສິບໂຕ ງົວຜູ້ສິບໂຕ ລໍແມ່ຊາວໂຕ ແລະລໍຜູ້ສິບໂຕ. 16ເພິ່ນໄດ້ມອບຝູງສັດແຕ່ລະຝູງໃຫ້
ຂ້າໃຊ້ແຕ່ລະຄົນ ເປັນຜູ້ເບິ່ງຮັກສາ ແລະສັ່ງພວກເຂົາວ່າ, "ຈົ່ງພາກັນເດີນທາງໄປກ່ອນຂ້ອຍ
ແລະໃຫ້ປ່ອຍໄລຍະຫ່າງກັນພໍສົມຄວນ." 17ເພິ່ນສັ່ງຂ້າໃຊ້ຜູ້ທີໜຶ່ງວ່າ, "ເມື່ອ ເອຊາວ ອ້າຍຂອງ
ຂ້ອຍພົບເຈົ້າ ແລະຖາມເຈົ້າຈະໄປໃສ? ໃຜເປັນນາຍຂອງເຈົ້າ? ສັດທີ່ຍ່າງໄປກ່ອນເປັນຂອງ
ໃຜ? 18ເຈົ້າຕ້ອງຕອບເພິ່ນວ່າ ສັດເຫລົ່ານັ້ນເປັນຂອງຢາໂຄບ ຂ້າໃຊ້ຂອງທ່ານ ເພິ່ນໄດ້ສັ່ງໃຫ້
ເອົາສັດເຫລົ່ານີ້ມາເປັນຂອງຕ້ອນແກ່ ເອຊາວ ນາຍຂອງຂ້ານ້ອຍ ສ່ວນເພິ່ນເອງກຳລັງເດີນທາງ
ມາຕາມຫລັງ."

19ຢາໂຄບ ໄດ້ສັ່ງຜູ້ທີສອງ ທີສາມ ແລະໝົດທຸກຄົນທີ່ຄຸມສັດໄປນັ້ນແບບດຽວກັນວ່າ, “ເມື່ອ
ເຈົ້າພົບ ເອຊາວ ຕ້ອງ ເວົ້າກັບ ເພິ່ນ ແບບນີ້ວ່າ, 20ຢາໂຄບ ຂ້າໃຊ້ຂອງທ່ານກຳລັງຍ່າງຕາມຫລັງ
ພວກຂ້ານ້ອຍມາ.” ຢາໂຄບ ຄິດໃນໃຈວ່າ, “ດ້ວຍຂອງຕ້ອນທີ່ຂ້ອຍສົ່ງໄປໃຫ້ລາວກ່ອນນັ້ນ
ລາວຄົງຈະເຫັນໃຈຂ້ອຍ ແລະເມື່ອຂ້ອຍພົບລາວ ບາງທີລາວອາດຈະຍົກໂທດໃຫ້ຂ້ອຍກໍໄດ້.”
21ຢາໂຄບ ໄດ້ສົ່ງຂອງຕ້ອນມາກ່ອນ ສ່ວນເພິ່ນເອງຍັງນອນຄ້າງຄືນຢູ່ທີ່ຄ້າຍ.

## ຢາໂຄບຕໍ່ສູ້ກັບຊາຍຜູ້ໜຶ່ງທີ່ເປນູເອນ

22ໃນຄືນດຽວກັນນັ້ນ ຢາໂຄບ ໄດ້ຕື່ນຂຶ້ນພາເມຍທັງສອງ ຂ້າໃຊ້ຍິງສອງຄົນ ແລະລູກສິບ
ເອັດຄົນຂ້າມແມ່ນ້ຳຢັບໂບກ. 23ຫລັງຈາກສົ່ງພວກເຂົາຂ້າມໝົດແລ້ວ ເພິ່ນກໍຈັດເອົາສິ່ງຂອງ
ຂ້າມໄປອີກ. 24ສ່ວນເພິ່ນເອງຍັງຄ້າງຢູ່ຟາກນ້ຳພຸ້ນຄົນດຽວ ແລ້ວມີຊາຍຄົນໜຶ່ງ ໄດ້ຕໍ່ສູ້ກັບເພິ່ນ
ຈົນຮອດຮຸ່ງເຊົ້າ. 25ໃນຂະນະທີ່ກຳລັງຕໍ່ສູ້ກັນ ຊາຍຜູ້ນັ້ນເຫັນວ່າຕົນຈະບໍ່ແພ້ ລາວຈຶ່ງຕີແອວ
ຂອງຢາໂຄບ ຈົນພິກໂບກ.

26ຊາຍຜູ້ນັ້ນເວົ້າວ່າ, “ປ່ອຍໃຫ້ຂ້ອຍໄປເສຍ ເພາະຕາເວັນກໍກຳລັງຈະຂຶ້ນແລ້ວ” ແຕ່ຢາໂຄບ
ຕອບວ່າ, “ຂ້ານ້ອຍຈະບໍ່ປ່ອຍທ່ານໄປ ຈົນກວ່າທ່ານຈະອວຍພອນໃຫ້ຂ້ານ້ອຍ.” 27ຊາຍຄົນນັ້ນ
ຈຶ່ງຖາມວ່າ, “ເຈົ້າຊື່ຫຍັງ?” ຢາໂຄບ ຕອບວ່າ, “ຂ້ານ້ອຍຊື່ຢາໂຄບ” 28ເພິ່ນເວົ້າຕື່ມອີກວ່າ, “ຊື່
ຂອງ ເຈົ້າຈະບໍ່ ແມ່ນ ຢາໂຄບ ອີກ ເພາະວ່າ ເຈົ້າ ໄດ້ຕໍ່ສູ້ກັບ ພຣະເຈົ້າ ແລະກັບມະນຸດ ຈົນຊະນະ
ດັ່ງນັ້ນ ເຈົ້າຈະມີຊື່ໃໝ່ວ່າ ອິສຣາເອນ.”

29ຢາໂຄບ ເວົ້າວ່າ, “ກະລຸນາບອກຊື່ທ່ານໃຫ້ຂ້ານ້ອຍຮູ້ແດ່.” ແຕ່ເພິ່ນຊ້ຳຕອບວ່າ, “ເປັນ
ຫຍັງເຈົ້າຈຶ່ງຖາມຊື່ຂ້ອຍ” ຄັນແລ້ວ ຊາຍຜູ້ນັ້ນກໍອວຍພອນໃຫ້ຢາໂຄບ. 30ຢາໂຄບ ເວົ້າວ່າ,
“ຂ້ອຍໄດ້ເຫັນ ພຣະເຈົ້າ ຕໍ່ໜ້າຕໍ່ຕາ ແຕ່ຂ້ອຍກໍຍັງບໍ່ຕາຍ” ດັ່ງນັ້ນ ເພິ່ນຈຶ່ງເອີ້ນບ່ອນນັ້ນວ່າ ເປ-
ນູເອນ.

31ຢາໂຄບ ອອກຈາກ ເປນູເອນ ໄປ ເມື່ອຕາເວັນກຳລັງຂຶ້ນ ເພິ່ນຍ່າງຂາເຢັກໄປ ເພາະ ເຈັບ-
ແອວ. 32ດ້ວຍເຫດຜົນດັ່ງກ່າວນີ້ ຊາວ ອິສຣາເອນ ຈຶ່ງບໍ່ກິນຊີ້ນເອນທີ່ຕໍ່ກັບແອວ ເພາະວ່າ
ແມ່ນຊີ້ນບ່ອນທີ່ ພຣະເຈົ້າ ໄດ້ຕີ.

# ບົດທີ 33

## ຢາໂຄບພົບເອຊາວ

1ເອຊາວ ພ້ອມລູກນ້ອງສີ່ຮ້ອຍຄົນໄດ້ມາຫາຢາໂຄບ ເມື່ອຢາໂຄບ ເຫັນເຊັ່ນນັ້ນ ເພິ່ນຈຶ່ງແບ່ງ
ເດັກນ້ອຍໃຫ້ ເລອາ ໃຫ້ຣາເຄນ ແລະໃຫ້ສາວໃຊ້ສອງຄົນ. 2ເພິ່ນໄດ້ໃຫ້ຄົນໃຊ້ສອງຄົນກັບລູກ
ຂອງລາວຢູ່ໜ້າ ເລອາ ແລະລູກຂອງລາວຢູ່ກາງ ຣາເຄນ ແລະ ໂຢເຊັບ ຢູ່ທາງຫລັງ. 3ສ່ວນຢາ-
ໂຄບ ເອງກໍອອກນຳໜ້າພວກເຂົາໄປ ແລ້ວຂາບລົງ ເຈັດເທື່ອຈົນເຂົ້າໄປຮອດອ້າຍ. 4ເອຊາວກໍ
ແລ່ນອອກໄປພົບພ້ອມທັງກອດ ແລະຈູບຢາໂຄບ ພວກເຂົາທັງສອງພາກັນຮ້ອງໄຫ້ 5ເມື່ອເອ-
ຊາວ ມີນຕາຂຶ້ນເຫັນຜູ້ຍິງ ແລະເດັກນ້ອຍເຫລົ່ານັ້ນຈຶ່ງຖາມວ່າ, “ຄົນທີ່ມານຳເຈົ້ານີ້ແມ່ນໃຜ?”
ຢາໂຄບ ຕອບວ່າ, “ອ້າຍເອີຍ ພວກນີ້ແມ່ນລູກຂອງນ້ອງເອງ ທີ່ ພຣະເຈົ້າ ໄດ້ຊົງໂຜດປະທານ

ໃຫ້.” 6ແລ້ວພວກເຂົາກໍຫຍັບເຂົ້າມາຂາບ ເອຊາວ ເປັນລຳດັບໄປ ຄືສາວໃຊ້ທັງສອງພ້ອມລູກ.
7ຕໍ່ມາ ແມ່ນ ເລອາລູກ ແລະສຸດທ້າຍແມ່ນຣາເຄນກັບໂຢເຊັບ.

8ເອຊາວ ຈຶ່ງຖາມວ່າ, “ຄັນຊັ້ນໝວດທີ່ຂ້ອຍພົບກ່ອນນັ້ນເດ? ແມ່ນພວກໃດກັນ?” ຢາໂຄບ
ຕອບວ່າ, “ພວກນັ້ນ ນ້ອງໄດ້ສົ່ງມາຂໍຄວາມເມດຕາຈາກອ້າຍກ່ອນ.” 9ແຕ່ ເອຊາວ ຕອບວ່າ,
“ນ້ອງເອີຍ ອ້າຍມີພຽງພໍແລ້ວ ຈົ່ງຮັກສາໄວ້ເພື່ອນ້ອງສາ.” 10ຢາໂຄບ ເວົ້າວ່າ, “ບໍ່ແມ່ນຢ່າງນັ້ນ
ຖ້າອ້າຍຫາກມີຄວາມກະລຸນາຕໍ່ນ້ອງແລ້ວ ຈົ່ງຮັບເອົາຂອງຕ້ອນນີ້ສາ ນ້ອງເຫັນໜ້າຕາຂອງ
ອ້າຍ ກໍຄືກັນກັບເຫັນພຣະພັກຂອງ ພຣະເຈົ້າ ແລະດຽວນີ້ອ້າຍກໍດີຕໍ່ນ້ອງຫລາຍແທ້ໆ. 11ຈົ່ງ
ຮັບເອົາຂອງຕ້ອນທີ່ນ້ອງເອົາມານີ້ສາ ເພາະ ພຣະເຈົ້າ ຊົງໂຜດກະລຸນານ້ອງ ແລະໄດ້ປະທານ
ທຸກສິ່ງທຸກຢ່າງທີ່ນ້ອງຕ້ອງການ” ຢາໂຄບອ້ອນວອນຢ່າງອ່ອນນ້ອມຈົນອ້າຍຍອມຮັບເອົາ.

12ຕໍ່ມາ ເອຊາວ ເວົ້າວ່າ, “ເຮົາພາກັນອອກເດີນທາງເທາະ ອ້າຍຈະນຳໜ້ານ້ອງໄປ”. 13ຢາ-
ໂຄບ ຈຶ່ງຕອບວ່າ, “ອ້າຍເອີຍ ອ້າຍກໍຮູ້ວ່າພວກເດັກນ້ອຍກໍຍັງອ່ອນແຮງ ແລະນ້ອງຍັງເປັນ
ຫ່ວງນຳຝູງສັດ ແລະລູກນ້ອຍຂອງມັນທີ່ຍັງກິນນົມຢູ່ ຖ້າພວກເຮົາຮີບຮ້ອນໄລ່ໄປໃນມື້ດຽວ ສັດ
ເຫລົ່ານີ້ກໍຈະຕາຍໝົດ. 14ຂໍອ້າຍຈົ່ງໄປກ່ອນນ້ອງສາ ສ່ວນນ້ອງຈະຕິດຕາມອ້າຍໄປຊ້າໆ” ແຕ່
ຈະພະຍາຍາມໄປໄວເທົ່າທີ່ຈະໄວໄດ້ຕາມຄວາມສາມາດຂອງເດັກນ້ອຍ ແລະຂອງສັດຈົນຮອດ
ເມືອງ ເສອີ.”

15ເອຊາວ ເວົ້າວ່າ, “ຄັນຊັ້ນອ້າຍຈະປະຄົນງານບາງຄົນໄວ້ກັບນ້ອງ” ແຕ່ຢາໂຄບຕອບວ່າ,
“ເປັນຄວາມກະລຸນາຂອງອ້າຍຫລາຍແທ້ໆ ແຕ່ນ້ອງເຫັນວ່າບໍ່ມີຄວາມຈຳເປັນ.”

16-17ໃນມື້ນັ້ນ ເອຊາວ ໄດ້ອອກເດີນທາງກັບ ເມືອງ ເສອີ ສ່ວນ ຢາໂຄບ ກໍເດີນທາງໄປເຖິງ
ສຸກໂກດ ແລ້ວສ້າງເຮືອນຢູ່ຫລັງໜຶ່ງສຳລັບຄອບຄົວ ແລະສ້າງຄອກສຳລັບຝູງສັດ ດ້ວຍເຫດນີ້
ບ່ອນນັ້ນຈຶ່ງມີຊື່ວ່າ ສຸກໂກດ.

18ເມື່ອເວລາກັບມາຈາກປະເທດ ເມໂຊໂປຕາເມຍ ຢາໂຄບ ໄດ້ໄປຮອດເມືອງ ເຊເຄັມ ໃນປະ-
ເທດ ການາອານ ຢ່າງປອດໄພ ເພິ່ນໄດ້ຕັ້ງຄ້າຍພັກຢູ່ຕໍ່ໜ້າເມືອງ. 19ແລະໄດ້ຊື້ທົ່ງນາໜຶ່ງລາຄາ
ຮ້ອຍຫລຽນຈາກລູກຊາຍຂອງ ຮາໂມ ພໍ່ຂອງ ເຊເຄັມ. 20ເພິ່ນສ້າງແທ່ນບູຊາຂຶ້ນທີ່ນັ້ນ ແລະໃສ່
ຊື່ວ່າ ເອນ ຜູ້ເປັນ ພຣະເຈົ້າ ຂອງ ອິສຣາເອນ.

# ບົດທີ 34

## ນາງດີນາຖືກຂົ່ມຂືນ

1ນາງ ດີນາ ລູກສາວ ຢາໂຄບ ແລະນາງ ເລອາ ໄດ້ພາກັນອອກໄປຫລິ້ນນຳພວກຜູ້ຍິງໃນເມືອງ
ເຊເຄັມ. 2ລູກຊາຍຂອງ ຮາໂມ ຊາວ ຮີວີ ຜູ້ເປັນເຈົ້າເມືອງໃນເມືອງນີ້ເຫັນນາງ ລາວຈຶ່ງຈັບເອົາ
ນາງໄປຂົ່ມຂືນ. 3ເຊເຄັມ ໄດ້ເຮັດດ້ວຍຄວາມຮັກ ລາວພະຍາຍາມອອຍ ແລະປະເລົ້າປະໂລມ
ນາງ. 4ຕໍ່ມາ ລາວຈຶ່ງເວົ້າກັບພໍ່ວ່າ, “ຈົ່ງໄປຂໍຍິງນີ້ໃຫ້ເປັນເມຍລູກດ້ວຍ.” 5ຢາໂຄບຮູ້ວ່າ ລູກ
ສາວຂອງຕົນໄດ້ຮັບຄວາມອັບອາຍຂາຍໜ້າ ເພິ່ນເລີຍບໍ່ຮູ້ຈະເຮັດແນວໃດ ເພາະລູກຊາຍຂອງ
ເພິ່ນທຸກຄົນກໍໄດ້ອອກໄປລ້ຽງສັດທີ່ທົ່ງນາ ສະນັ້ນ ເພິ່ນຈຶ່ງລໍຖ້າໃຫ້ເຂົາກັບມາກ່ອນ.

6ຮາໂມ ພໍ່ຂອງ ເຊເຄັມ ໄດ້ໄປປຶກສາຫາລືກັນກັບ ຢາໂຄບ. 7ເປັນເວລາພໍດີກັບລູກຊາຍຂອງ
ຢາໂຄບ ກັບມາແຕ່ທົ່ງນາ ເມື່ອພວກເຂົາຮູ້ວ່າ ເຊເຄັມ ໄດ້ຂົ່ມຂືນ ດີນາ ພວກເຂົາກໍຄຽດແຄ້ນ
ແລະທຸກໃຈຫລາຍ ທີ່ລາວໄດ້ເຮັດໃນສິ່ງທີ່ບໍ່ສົມຄວນ ໂດຍໃຫ້ພວກອິສຣາເອນ ໄດ້ຮັບຄວາມ
ໝິ່ນປະໝາດນິນທາ ແລະອັບອາຍຂາຍໜ້າ.

8ແຕ່ຮາໂມ ໄດ້ເວົ້າຕໍ່ພວກເຂົາວ່າ, “ເຊເຄັມ ລູກຊາຍຂອງຂ້ອຍໄດ້ຫລົງຜິດຮັກລູກສາວຂອງ
ເຈົ້າ ຂໍໃຫ້ພວກເຂົາໄດ້ແຕ່ງງານກັນສາ. 9ຂໍພວກເຮົາຈົ່ງເປັນອັນໜຶ່ງອັນດຽວກັນ ໂດຍໃຫ້ລູກ
ຂອງພວກເຮົາໄດ້ແຕ່ງງານກັນ ຄືລູກຊາຍຂອງຂ້ອຍຈະແຕ່ງງານກັບລູກສາວຂອງເຈົ້າ ແລະ
ລູກຊາຍຂອງເຈົ້າຈະແຕ່ງງານກັບລູກສາວຂອງຂ້ອຍກໍໄດ້. 10ຕໍ່ໄປ ເຮົາກໍຈະຢູ່ໃນດິນແດນນີ້ນຳ
ກັນ ເຈົ້າຈະຢູ່ບ່ອນໃດກໍໄດ້ ເຈົ້າຈະຄ້າຂາຍ ແລະມີດິນເປັນຂອງພວກເຈົ້າໄດ້ຕາມໃຈມັກ.”

11ຄັນແລ້ວ ເຊເຄັມ ຈຶ່ງເວົ້າຕໍ່ພໍ່ ແລະອ້າຍນ້ອງຂອງ ດີນາ ວ່າ, “ຈົ່ງໃຫ້ຄວາມກະລຸນາຕໍ່ຂ້ອຍ
ທ້ອນ ແລະຂ້ອຍຈະໃຫ້ທຸກຢ່າງທີ່ເຈົ້າຕ້ອງການ. 12ຈົ່ງບອກຂ້ອຍມາສິ່ງທີ່ເຈົ້າຕ້ອງການ ຈະ
ແມ່ນຂອງຂວັນແລະເງິນຄ່າສິນສອດຫລາຍເທົ່າໃດກໍໄດ້ ຕາມທີ່ເຈົ້າຕ້ອງການຂ້ອຍຈະໃຫ້ທຸກ
ສິ່ງທີ່ເຈົ້າຂໍມາ ຂໍພຽງແຕ່ໃຫ້ຂ້ອຍໄດ້ແຕ່ງງານກັບນາງເທົ່ານັ້ນ.”

13ລູກຊາຍ ຢາໂຄບ ຕອບ ເຊເຄັມ ແລະ ຮາໂມ ໃນທຳນອງຫລອກລວງ ເພາະ ເຊເຄັມ ໄດ້ເຮັດ
ໃຫ້ນ້ອງສາວຂອງພວກເຂົາອັບອາຍຂາຍໜ້າ. 14ພວກເຂົາເວົ້າວ່າ, “ພວກເຮົາບໍ່ຍອມໃຫ້ນາງ ດີ-
ນາ ແຕ່ງງານກັບຜູ້ຊາຍທີ່ບໍ່ໄດ້ຮັບພິທີຕັດ ເພາະວ່າມັນເປັນການເສຍກຽດສຳລັບພວກເຮົາ. 15ມີ
ເງື່ອນໄຂດຽວເທົ່ານັ້ນທີ່ພວກເຮົາຈະຕົກລົງກັນໄດ້ຄືພວກເຈົ້າຕ້ອງເປັນຄືກັນກັບພວກເຮົາ ຄືຜູ້
ຊາຍທຸກໆ ຄົນຈະຕ້ອງໄດ້ຮັບພິທີຕັດ. 16ແລ້ວພວກເຮົາກໍຈະຍອມໃຫ້ພວກເຈົ້າແຕ່ງງານກັບລູກ
ສາວຂອງພວກເຮົາ ແລະພວກເຮົາກໍຈະແຕ່ງງານກັບລູກສາວຂອງພວກເຈົ້າໄດ້ ແລ້ວພວກເຮົາ
ຈະຢູ່ຮ່ວມກັນ ແລະເປັນປະຊາຊົນອັນໜຶ່ງອັນດຽວກັນ. 17ແຕ່ຖ້າຫາກວ່າເຈົ້າບໍ່ຍິນຍອມຮັບຂໍ້
ສະເໜີຂອງພວກເຮົາ ພວກເຮົາກໍຈະເອົານາງຄືນມາ ແລະອອກໜີຈາກປະເທດນີ້ໄປ.”

18-19ຮາໂມ ກັບ ເຊເຄັມ ລູກຊາຍ ເຫັນວ່າເງື່ອນໄຂນັ້ນເປັນທີ່ພໍໃຈແລ້ວ ດັ່ງນັ້ນ ເຊເຄັມ ຈຶ່ງຮັບ
ເອົາຕາມຂໍ້ທີ່ສະເໜີມາ ກໍຍ້ອນວ່າຮັກນາງ ດີນາ ຫລາຍ ເຊເຄັມ ເປັນຄົນທີ່ໜ້ານັບຖືຫລາຍໃນ
ຄອບຄົວຂອງລາວ. 20ຮາໂມ ກັບ ເຊເຄັມ ລູກຊາຍຂອງ ເພິ່ນໄດ້ພາກັນໄປບ່ອນປະຊຸມທີ່ປະຕູ
ເມືອງ ແລະເວົ້າກັບຊາວເມືອງວ່າ, 21“ຄົນພວກນີ້ເປັນມິດກັນກັບພວກເຮົາຈົ່ງໃຫ້ພວກເຂົາອາໄສ
ຢູ່ປະເທດນີ້ ແລະໂຍກຍ້າຍໄປມາຕາມໃຈມັກ ດິນແດນກໍກວ້າງຂວາງຢູ່ສຳລັບພວກເຂົາ ຈົ່ງໃຫ້
ລູກຊາຍກັບລູກສາວຂອງພວກເຮົາ ແລະຂອງພວກເຂົາໄດ້ແຕ່ງງານກັນ. 22ພວກເຂົາຈະຍິນ
ຍອມຢູ່ນຳພວກເຮົາແລະເປັນປະຊາຊົນອັນໜຶ່ງອັນດຽວກັນກັບພວກເຮົາ ແຕ່ມີພຽງເງື່ອນໄຂດຽວ
ເທົ່ານັ້ນທີ່ພວກເຮົາຕ້ອງປະຕິບັດ ຄືໃຫ້ຜູ້ຊາຍທຸກໆ ຄົນຂອງພວກເຮົາຈົ່ງຮັບພິທີຕັດຄືກັບພວກ
ເຂົາ. 23ຍັງບໍ່ແລ້ວເທົ່ານັ້ນ ສັດທັງຫລາຍພ້ອມທັງສິ່ງຂອງທັງໝົດກໍຈະເປັນຂອງພວກເຮົາ ດັ່ງ-
ນັ້ນຈົ່ງຍອມຮັບເອົາເງື່ອນໄຂຂອງພວກເຂົາ ແລ້ວໃຫ້ພວກເຂົາຢູ່ນຳພວກເຮົາສາ”

24ປະຊາຊົນທຸກໆ ຄົນໃນເມືອງກໍເຫັນດີ ແລະຍອມປະຕິບັດຕາມຄຳທີ່ຮາໂມກັບ ເຊເຄັມ ໄດ້
ສະເໜີມາ ແລະຜູ້ຊາຍທຸກໆ ຄົນກໍເຂົ້າຮັບພິທີຕັດໝົດ. 25ສາມມື້ຕໍ່ມາ ໃນເວລາທີ່ພວກຜູ້ຊາຍ

ຍັງເຈັບປ່ວຍຢູ່ ເນື່ອງມາຈາກການຮັບພິທີຕັດ ຊີເມໂອນ ແລະ ເລວີ ຊຶ່ງເປັນອ້າຍຂອງນາງດີນາ
ແລະເປັນລູກຂອງຢາໂຄບ ໄດ້ຖືດາບເຂົ້າໄປໃນເມືອງຢ່າງບໍ່ມີໃຜສົງໄສ. [26]ແລ້ວຂ້າຜູ້ຊາຍ
ທຸກໆ ຄົນໃນເມືອງນັ້ນ ພວກເຂົາຂ້າຮາໂມ ແລະ ເຊເຄັມ ແລ້ວພານາງດີນາໜີອອກຈາກເຮືອນ
ຂອງ ເຊເຄັມ ມາ. [27]ຍ້ອນນ້ອງສາວຂອງພວກເຂົາໄດ້ຮັບຄວາມອັບອາຍຂາຍໜ້າ ລູກຊາຍຄົນ
ອື່ນອີກຂອງຢາໂຄບ ຈຶ່ງໄດ້ຕໍ່ສູ້ກັນກັບຜູ້ບາດເຈັບ ແລ້ວເອົາສິ່ງຂອງທີ່ມີຄ່າທີ່ມີໃນເມືອງນັ້ນໄປ.
[28]ພວກເຂົາໄດ້ເອົາຝູງສັດຄືງົວຄວາຍ ລໍພ້ອມສິ່ງຂອງໃນເມືອງ ແລະໃນທົ່ງນາໄປໝົດ. [29]ຍຶດ
ເອົາສິ່ງຂອງທີ່ມີຄ່າທັງໝົດ ຈັບເອົາລູກເມຍຂອງຄົນເຫລົ່ານັ້ນ ແລະຂົນເອົາທຸກສິ່ງໃນເຮືອນໄປ
ໝົດ.
[30]ຢາໂຄບ ຈຶ່ງ ເວົ້າກັບ ຊີເມໂອນ ແລະ ເລວີ ວ່າ, "ໝູ່ເຈົ້າໄດ້ກໍ່ເລື່ອງວຸ້ນວາຍໃຫ້ຂ້ອຍ ບັດນີ້
ປະຊາຊົນທຸກຄົນໃນປະເທດນີ້ ຄືຊາວ ການາອານ ຊາວ ເປຣີຊີ ຕ້ອງຊັງໜັງໜ້າຂ້ອຍ ຖ້າພວກ
ປະຊາຊົນ ເຫລົ່ານັ້ນພ້ອມໃຈກັນມາໂຈມຕີ ຂ້ອຍກັບຄອບຄົວກໍຈະຖືກຂ້າຖິ້ມ ເພາະວ່າຂ້ອຍມີ
ຄົນບໍ່ຫລາຍ." [31]ແຕ່ພວກເຂົາຕອບວ່າ, "ເຮົາບໍ່ຍອມໃຫ້ເຂົາເຮັດນ້ອງສາວເຮົາຄືດັ່ງຍິງຊົ່ວ."

# ບົດທີ 35

## ພຣະເຈົ້າອວຍພອນຢາໂຄບທີ່ເບັດເອນ

[1]ພຣະເຈົ້າ ຊົງກ່າວຕໍ່ຢາໂຄບ ວ່າ, "ຮີບຕຽມຕົວແລ້ວອອກໄປອາໄສຢູ່ ເບັດເອນ ໃນທີ່ນັ້ນ ຈົ່ງ
ສ້າງ ແທ່ນບູຊາ ພຣະເຈົ້າ ຜູ້ປະກົດຕໍ່ ເຈົ້າ ເມື່ອ ເຈົ້າກຳລັງປົບໜີຈາກ ເອຊາວ ອ້າຍຂອງ ເຈົ້າ."
[2]ດັ່ງນັ້ນ ຢາໂຄບ ຈຶ່ງບອກກັບຄອບຄົວຂອງຕົນ ແລະທຸກຄົນທີ່ອາໄສຢູ່ນຳວ່າ, "ຈົ່ງປະຖິ້ມຮູບ
ພະທັງຫລາຍທີ່ມີຢູ່ ພ້ອມທັງຊຳລະກາຍໃຈໃຫ້ສະອາດຜ່ອງໃສ ແລະນຸ່ງເຄື່ອງອັນຈົບງາມ.
[3]ພວກເຮົາຈະໜີໄປຢູ່ ເບັດເອນ ໃນບ່ອນນັ້ນຂ້ອຍຈະສ້າງແທ່ນສຳລັບຖວາຍບູຊາ ພຣະເຈົ້າ ອົງ
ໄດ້ຊົງສະຖິດຢູ່ນຳຂ້ອຍ ໃນທຸກໆບ່ອນທີ່ຂ້ອຍໄປ ແລະໄດ້ຊົງຊົດຊ່ອຍຂ້ອຍເວລາທຸກຍາກລຳ-
ບາກ."
[4]ດັ່ງນັ້ນ ພວກເຂົາຈຶ່ງເອົາຮູບພະທີ່ມີຢູ່ ແລະຕຸ້ມຫູທີ່ພວກເຂົາໃສ່ມອບໃຫ້ຢາໂຄບ ເພິ່ນຈຶ່ງ
ເອົາເຄື່ອງ ເຫລົ່ານີ້ໄປຝັງໄວ້ກ້ອງຕົ້ນໝາກກໍ່ໃກ້ໆ ເມືອງ ເຊເຄັມ. [5]ເມື່ອຢາໂຄບ ພ້ອມທັງລູກ
ຊາຍຂອງຕົນກຳລັງອອກເດີນທາງ ຄົນທີ່ຢູ່ໃນເມືອງໃກ້ຄຽງກໍເກີດມີຄວາມຢ້ານຢ່າງໃຫຍ່ ຈົນບໍ່
ສາມາດໄລ່ຕິດຕາມພວກເຂົາໄປ.
[6]ຢາໂຄບ ພ້ອມປະຊາຊົນທຸກຄົນໄດ້ມາຮອດ ເມືອງ ລູເຊ (ຫລື ເບັດເອນ) ທີ່ປະເທດ ການາ-
ອານ. [7]ໃນທີ່ນັ້ນ ເພິ່ນໄດ້ສ້າງແທ່ນສຳລັບຖວາຍບູຊາແລ້ວໃສ່ຊື່ບ່ອນນັ້ນວ່າ ເບັດເອນ ກໍ
ເພາະວ່າ ພຣະເຈົ້າ ໄດ້ຊົງປາກົດແກ່ເພິ່ນ ຄາວເພິ່ນປົບໜີຈາກອ້າຍຂອງເພິ່ນ. [8]ຄັນຕໍ່ມາ ນາງ
ເດໂບຣາ ແມ່ນົມຂອງ ເຣເບກາ ກໍເຖິງແກ່ກຳ ລາວໄດ້ເອົາສົບຂອງນາງຝັງໄວ້ກ້ອງຕົ້ນໝາກກໍ່
ທາງທິດໃຕ້ຂອງເມືອງ ເບັດເອນ ລາວຈຶ່ງໃສ່ຊື່ຕົ້ນໄມ້ນັ້ນວ່າ, "ຕົ້ນໝາກກໍ່ແຫ່ງການຮ້ອງໄຫ້."
[9]ເມື່ອຢາໂຄບ ກັບຈາກປະເທດ ເມໂຊໂປຕາເມຍ ພຣະເຈົ້າ ໄດ້ຊົງປະກົດຕໍ່ເພິ່ນອີກ ແລະຊົງ
ອວຍພອນໃຫ້ເພິ່ນວ່າ, [10]"ຕໍ່ໄປນີ້ ຊື່ຂອງເຈົ້າຈະບໍ່ແມ່ນຢາໂຄບ ອີກ ຊື່ຂອງເຈົ້າຈະແມ່ນ ອິ-

ສຣາເອນ” ດັ່ງນັ້ນເພິ່ນຈຶ່ງມີຊື່ວ່າ ອິສຣາເອນ. [11]ແລ້ວ ພຣະເຈົ້າ ຊົງກ່າວຕໍ່ໄປວ່າ, “ເຮົາແມ່ນ
ພຣະຜູ້ເປັນເຈົ້າ ຜູ້ມີອຳນາດຍິ່ງໃຫຍ່ ເຈົ້າຈະມີເຊື້ອສາຍຢ່າງຫລວງຫລາຍ ຈົນ ເປັນຫລາຍຊົນ
ຊາດ ແລະຍັງມີບາງຄົນອີກໃນເຊື້ອສາຍຂອງເຈົ້າ ຈະເປັນກະສັດ. [12]ເຮົາຈະເອົາດິນຊຶ່ງເຮົາໄດ້
ໃຫ້ອັບຣາຮາມ ແລະ ອີຊາກ ນັ້ນໃຫ້ເຈົ້າ ແລະເຊື້ອສາຍຂອງເຈົ້າສືບຕໍ່ໄປ.” [13]ຄັນແລ້ວ ພຣະ-
ເຈົ້າ ກໍສະເດັດຈາກບ່ອນທີ່ພຣະອົງຊົງກ່າວຕໍ່ເພິ່ນຄືນສູ່ສະຫວັນ. [14]ຢາໂຄບ ຈຶ່ງຝັງເສົາຫີນເປັນ
ອະນຸສອນໄວ້ທີ່ນັ້ນ ເພິ່ນໄດ້ຖອກເຄື່ອງດື່ມຖວາຍບູຊາໃສ່ເທິງເສົາຫີນ ແລະແລ້ວກໍເອົານ້ຳມັນທີ່
ມີກິ່ນຫອມຖອກໃສ່ອີກ. [15]ຢາໂຄບ ໃສ່ຊື່ບ່ອນນັ້ນວ່າ ເບັດເອນ.

## ນາງຣາເຄນເສຍຊີວິດ

[16]ພວກເຂົາພາກັນອອກຈາກ ເບັດເອນ ໄປ ເມື່ອເດີນທາງໄປໃກ້ຈະຮອດ ເອຟຣາທາ ແລ້ວ
ນາງ ຣາເຄນ ກໍເຈັບທ້ອງຈະອອກລູກ ເທື່ອນີ້ນາງອອກລູກລຳບາກຫລາຍ. [17]ເມື່ອນາງເບັ່ງລູກ
ເມື່ອໃດ ນາງຜະດຸງຄັນກໍເວົ້າກັບນາງວ່າ, “ບໍ່ຕ້ອງຢ້ານ ເຈົ້າຈະໄດ້ລູກຜູ້ຊາຍອີກ.” [18]ນາງສິ້ນ
ໃຈຕາຍຫລັງຈາກອອກລູກແລ້ວ ແຕ່ກ່ອນສິ້ນໃຈຕາຍນາງໃສ່ຊື່ລູກວ່າ ເບັນໂອນີ ແຕ່ຢາໂຄບ
ໃສ່ຊື່ໃຫ້ໃໝ່ວ່າ ເບັນຢາມິນ. [19]ຢາໂຄບ ໄດ້ເອົາສົບນາງ ຣາເຄນ ໄປຝັງໄວ້ກັບແຄມທາງໄປ
ເມືອງ ເອຟຣາທາ (ປັດຈຸບັນແມ່ນເມືອງ ເບັດເລເຮັມ). [20]ຄັນແລ້ວ ເພິ່ນໄດ້ຝັງເສົາຫີນເທິງຫລຸມ
ຝັງສົບເປັນອະນຸສອນ ແລະເສົານັ້ນໄດ້ເອີ້ນວ່າ, “ເສົານາງ ຣາເຄນ” ມາເທົ່າທຸກວັນນີ້.
[21]ຕໍ່ມາ ອິສຣາເອນ ໄດ້ຍ້າຍໄປຕັ້ງຄ້າຍພັກອາໄສຢູ່ທາງຟາກຫໍຄອຍ ເອເດ ເບື້ອງນັ້ນ.

## ລູກຊາຍຂອງຢາໂຄບ

[22]ເມື່ອ ອິສຣາເອນ ໄດ້ອາໄສຢູ່ໃນປະເທດນັ້ນ ຣູເບັນ ໄດ້ລັກນອນນຳນາງ ບິນຮາ ເມຍນ້ອຍ
ຂອງພໍ່ເມື່ອ ອິສຣາເອນ ຜູ້ເປັນພໍ່ຮູ້ເລື່ອງນີ້ກໍມີຄວາມຢາກຮ້າຍຫລາຍ.

[23]ລູກຊາຍສິບສອງຄົນທີ່ຢູ່ນຳ ຢາໂຄບ ມີດັ່ງນີ້: ລູກຊາຍທີ່ເກີດຈາກນາງ ເລອາ ຄື ຣູເບັນ ລູກ
ຊາຍກົກ ຊີເມໂອນ ເລວີ ຢູດາ ອິດຊາຄາ ແລະ ເຊບູລູນ.

[24]ລູກຊາຍທີ່ເກີດຈາກນາງ ຣາເຄນ ຄື ໂຢເຊັບ ແລະ ເບັນຢາມິນ.

[25]ລູກຊາຍທີ່ເກີດຈາກນາງ ບິນຮາ ສາວໃຊ້ນາງ ຣາເຄນ ຄື ດານ ແລະ ນັບທາລີ.

[26]ລູກຊາຍທີ່ເກີດຈາກນາງ ຊິລະປາ ສາວໃຊ້ນາງ ເລອາ ຄື ຄາດ ແລະ ອາເຊ. ຄົນເຫລົ່ານີ້
ແມ່ນລູກຊາຍຂອງ ຢາໂຄບ ທີ່ເກີດຢູ່ ເມໂຊໂປຕາເມຍ.

## ອີຊາກເຖິງແກ່ກຳ

[27]ຢາໂຄບ ໄດ້ກັບຄືນມາຫາ ອີຊາກ ພໍ່ຂອງຕົນທີ່ ມາມເຣ (ມີຊື່ອີກວ່າ ກີຣີອາດ-ອາຣະບາ ຫລື
ເຮັບໂຣນ) ບ່ອນທີ່ ອັບຣາຮາມ ແລະ ອີຊາກ ໄດ້ເຄີຍອາໄສຢູ່. [28-29]ອີຊາກ ໄດ້ເຖິງແກ່ກຳໄປຢູ່ນຳ
ພີ່ນ້ອງຂອງເພິ່ນ ເມື່ອອາຍຸໄດ້ຮ້ອຍແປດສິບປີ ຢາໂຄບ ແລະ ເອຊາວ ລູກຊາຍຂອງເພິ່ນເອງເປັນ
ຜູ້ຝັງສົບ.

# ບົດທີ 36

## ເຊື້ອສາຍຂອງເອຊາວ

1ເຊື້ອສາຍຂອງ ເອຊາວ (ຫລື ເອໂດມ) ມີດັ່ງນີ້:
2ເອຊາວ ມີເມຍ ຊາວ ການາອານ ສາມຄົນ ຄືນາງ ອາດາ ລູກສາວຂອງ ເອໂລນ ຊາວ ຮິດຕີ
ນາງ ໂອໂຮລີບາມາ ລູກສາວຂອງ ອານາ ແລະຫລານຂອງຊີເບໂອນ ຊາວຮີວີ. 3ແລະນາງ ບາ-
ເຊມາດ ນ້ອງສາວຂອງນາງ ເນບາໂຢດ ເປັນລູກສາວຂອງ ອິດຊະມາເອນ.
4ອາດາ ມີລູກຊາຍກັບ ເອຊາວ ຜູ້ໜຶ່ງຊື່ ເອລີຟັດ ບາເຊມາດ ມີລູກຊາຍຜູ້ໜຶ່ງຊື່ ເຣອູເອນ.
5ແລະ ໂອໂຮລີບາມາ ມີລູກຊາຍຊື່ ເຢອຸດ ຢາລາມ ແລະ ໂກຣາ ພວກເຂົາທັງໝົດເປັນລູກຊາຍ
ຂອງ ເອຊາວ ທີ່ເກີດເວລາເພິ່ນອາໄສໃນປະເທດ ການາອານ.
6ຄັນຕໍ່ມາ ເອຊາວ ໄດ້ພາເມຍ ລູກຊາຍຍິງ ແລະໝົດທຸກຄົນຢູ່ໃນເຮືອນຂອງເພິ່ນ ພ້ອມທັງ
ສັດ ແລະທຸກສິ່ງທີ່ມີຢູ່ໃນປະເທດ ການາອານ ໜີຈາກຢາໂຄບ ນ້ອງຊາຍຂອງຕົນໄປຍັງປະເທດ
ອື່ນ. 7ເພິ່ນໜີໄປກໍເພາະວ່າດິນບ່ອນທີ່ເພິ່ນ ແລະຢາໂຄບຢູ່ນັ້ນບໍ່ພຽງພໍສຳລັບພວກເຂົາ ພວກ
ເຂົາມີຝູງສັດຫລາຍແລະບໍ່ສາມາດຢູ່ນຳກັນໄດ້. 8ສະນັ້ນ ເອຊາວ (ຫລື ເອໂດມ) ຈຶ່ງໄປອາໄສຢູ່
ພູນ້ອຍຂອງປະເທດ ເສອີ.
9ຕໍ່ໄປແມ່ນເຊື້ອສາຍຂອງ ເອຊາວຜູ້ຊຶ່ງໃຫ້ກຳເນີດຕະກູນ ເອໂດມທີ່ອາໄສຢູ່ເທິງພູນ້ອຍ ເສອີ
10ລູກຊາຍທັງຫລາຍຂອງ ເອຊາວ ມີຊື່ດັ່ງນີ້ຄື ເອລີຟັດ ລູກຊາຍຂອງ ອາດາ ແລະ ເຣອູເອນ
ລູກຊາຍຂອງ ບາເຊມາດ
11ລູກຊາຍຂອງ ເອລີຟັດ ມີຄື ເຕມານ ໂອມາ ເຊໂຟ ກາຕາມ ແລະ ເກນັດ.
12ຕິມນາ ເປັນເມຍ ເອລີຟັດ ຜູ້ຊຶ່ງເປັນລູກຊາຍຂອງ ເອຊາວ ນາງໄດ້ລູກຊາຍຊື່ ອາມາເລັກ
ຄົນເຫລົ່ານີ້ແມ່ນລູກຊາຍຂອງ ອາດາ ເມຍຂອງ ເອຊາວ.
13ລູກຊາຍຂອງ ເຣອູເອນ ມີຄື ນາຮາດ ເຊຣາ ຊາມມາ ແລະ ມິດຊາ ຄົນເຫລົ່ານີ້ ແມ່ນລູກ
ຊາຍຂອງ ບາເຊມາດ ເມຍຂອງ ເອຊາວ.
14ລູກຊາຍຂອງນາງ ໂອໂຮລີບາມາ ຊຶ່ງເປັນລູກຂອງ ອານາ ແລະຫລານຂອງ ຊີເບໂອນ
ເມຍຂອງ ເອຊາວ ມີຄື ເຢອຸດ ຢາລາມ ແລະ ໂກຣາ ເຂົາເປັນລູກຊາຍຂອງນາງ ໂອໂຮລີບາມາ
ແລະ ເອຊາວ.
15ຕໍ່ໄປນີ້ ແມ່ນຫົວໜ້າເຊື້ອສາຍຂອງ ເອຊາວ ຄືພວກລູກຂອງ ເອລີຟັດ ລູກຊາຍກົກຂອງ
ເອຊາວ ຫົວຫນ້າຕະກຸນ ຄື ເຕມານ ໂອມາ ເຊໂຟ ເກນັດ 16ໂກຣາ, ກາຕາມ ແລະ ອາ-
ມາເລັກ. ພວກເຫລົ່ານີ້ເປັນຫົວໜ້າຕະກຸນ ເອລີຟັດ ໃນດິນແດນ ເອໂດມ ແລະ ພວກເຂົາເປັນ
ລູກຊາຍຂອງ ອາດາ.
17ພວກລູກຊາຍຂອງ ເຣອູເອນ ຊຶ່ງເປັນລູກຊາຍຂອງ ເອຊາວ ເປັນຫົວໜ້າຂອງພວກ ນາ-
ຮາດ ເຊຣາ ຊາມມາ ແລະ ມິດຊາ ຄົນເຫລົ່ານີ້ເປັນຫົວໜ້າຂອງຕະກຸນ ເຣອູເອນຢູ່ໃນປະເທດ
ເອໂດມ ພວກເຂົາເປັນລູກຊາຍນາງ ບາເຊມາດ ເມຍຂອງ ເອຊາວ.
18ພວກລູກຊາຍຂອງນາງ ໂອໂຮລີບາມາ ຊຶ່ງເປັນເມຍຂອງ ເອຊາວ ເປັນຫົວໜ້າຂອງຕະກຸນ

ເຢອຸດ ຢາລາມ ແລະ ໂກຣາ ພວກຫົວໜ້າເຫລົ່ານີ້ເກີດຈາກນາງ ໂອໂຮລີບາມາ ຊຶ່ງເປັນລູກ
ສາວຂອງ ອານາ ແລະເປັນເມຍຂອງ ເອຊາວ.
[19]ຄົນເຫລົ່ານີ້ເປັນເຊື້ອສາຍຂອງ ເອຊາວ (ເອໂດມ) ແລະເປັນຫົວໜ້າຕະກຸນຕ່າງໆ.

## ເຊື້ອສາຍຂອງເສອີ

[20]ຕໍ່ໄປນີ້ ແມ່ນພວກລູກຊາຍຂອງ ເສອີຊາວ ໂຮຣີ ຊຶ່ງເປັນປະຊາຊົນຂອງປະເທດ ເອໂດມ ຄື
ໂລຕັນ ໂຊບານ ຊີເບໂອນ ອານາ [21]ດີໂຊນ ເອເຊ ແລະດີຊານ ພວກເຫລົ່ານີ້ເປັນລູກຊາຍ
ຂອງ ເສອີ ເປັນຫົວໜ້າຂອງຕະກຸນ ໂຮຣີຢູ່ໃນປະເທດ ເອໂດມ.
[22]ໂຮຣີ ແລະ ເຮມານ ເປັນລູກຊາຍຂອງ ໂລຕັນ ແລະ ຕິມນາ ເປັນນ້ອງສາວຂອງ ໂລຕັນ.
[23]ພວກລູກຊາຍຂອງ ໂຊບານ ຄືອັນວານ ມານາຮາດ ເອບານ ເຊໂຟ ແລະ ໂອນາມ.
[24]ພວກລູກຊາຍຂອງຊີເບໂອນ ຄື ອາອີຢາ ແລະ ອານາ (ອານາ ເປັນຜູ້ພົບນໍ້າຮ້ອນອອກບໍ່ຢູ່
ໃນປ່າກັນດານ ເມື່ອເວລາລາວລ້ຽງຝູງລໍຂອງຊີເບໂອນ ພໍ່ຂອງລາວ).
[25]ພວກລູກຊາຍຂອງ ອານາ ຄື ດີໂຊນ ແລະ ໂອໂຮລີບາມາ ລູກສາວຂອງ ອານາ.
[26]ພວກລູກຊາຍຂອງ ດີໂຊນ ຄື ເຮັມດານ ເອຊະບານ ອິດຣັນ ແລະ ເກຣານ.
[27]ພວກລູກຊາຍຂອງ ເອເຊ ຄື ບິນຮານ ຊາອາວານ ແລະ ອາການ.
[28-30]ພວກລູກຊາຍຂອງ ດີຊານ ຄື ອູເຊ ແລະ ອາຣານ ຄົນເຫລົ່ານີ້ເປັນພວກຫົວໜ້າຂອງ
ຊາວ ໂຮຣີຄື ໂລຕັນ ໂຊບານ ຊີເບໂອນ ອານາ ດີໂຊນ ເອເຊແລະດີຊານ ຄົນເຫລົ່ານີ້ເປັນ
ຫົວໜ້າຂອງຊາວ ໂຮຣີຕາມຕະກຸນຢູ່ໃນປະເທດ ເສອີ.

## ເຈົ້າຊີວິດເມືອງເອໂດມ

[31]ເຈົ້າຊີວິດທີ່ມາປົກຄອງປະເທດ ເອໂດມ ກ່ອນທີ່ເຈົ້າຊີວິດ ອິສຣາເອນ ໄດ້ມາປົກຄອງຢູ່ທີ່
ນັ້ນມີຄື.
[32]ກະສັດ ເບລາ ລູກຂອງ ເບໂອ ມາແຕ່ເມືອງ ດິນຮາບາ ມາປົກຄອງໃນປະເທດ ເອໂດມ.
[33]ເມື່ອ ເບລາ ສິ້ນພະຊົນ ແລ້ວ ໂຢບັບ ລູກຊາຍຂອງ ເຊຣາ ຊຶ່ງມາຈາກ ເມືອງ ໂບຊະຣາ ກໍມາ
ປົກຄອງແທນ.
[34]ເມື່ອ ໂຢບັບ ສິ້ນພະຊົນ ຮູຊາມ ຊຶ່ງມາຈາກເມືອງ ເຕມານ ກໍມາປົກຄອງແທນ
[35]ເມື່ອ ຮູຊາມ ສິ້ນພະຊົນ ຮາດັດ ລູກຂອງ ເບດັດ ຜູ້ຮົບຊະນະຊາວ ມີດີອານ ໃນປະເທດ ໂມ-
ອາບ ກໍມາປົກຄອງແທນ ເພິ່ນມາແຕ່ເມືອງ ອາວິດ.
[36]ເມື່ອ ຮາດັດ ສິ້ນພະຊົນ ສາມລາ ຊຶ່ງມາຈາກ ມາຊະເຣກາ ກໍມາປົກຄອງແທນ.
[37]ເມື່ອ ສາມລາ ສິ້ນພະຊົນ ຊາອູນ ຊຶ່ງມາຈາກເມືອງ ເຣໂຮໂບດ ທີ່ຕັ້ງຢູ່ແຄມແມ່ນໍ້າ ເອຟຣາດ
ກໍມາປົກຄອງແທນ.
[38]ເມື່ອ ຊາອູນ ສິ້ນພະຊົນ ບາອານ ຮານານ ລູກຊາຍຂອງ ອັກໂບ ກໍມາປົກຄອງແທນ.
[39]ເມື່ອ ບາອານ ຮານານ ລູກຊາຍຂອງ ອັກໂບ ສິ້ນພະຊົນ ຮາດາ ກໍມາປົກຄອງແທນ ເພິ່ນ
ມາຈາກເມືອງ ປາອູ ມະເຫສີຊື່ວ່າ ເມເຮຕາເບນ ລູກສາວ ມາດເຣັດ ຫລານ ເມຊາຮາບ.
[40]ຕໍ່ໄປນີ້ ແມ່ນຫົວໜ້າຂອງຕະກຸນ ເອຊາວ ຕາມຊື່ ແລະບ່ອນທີ່ພວກເຂົາອາໄສຢູ່ ຄື ຕິມນາ

ອັນວາ ເຢເທັດ ໂອໂຮລີບາມາ 41ເອລາ ປີໂນນ 42-43ເກນັດ ເຕມານ ມິບຊາ ມັກດີເອນ
ແລະອີຣາມ ຄົນເຫລົ່ານີ້ເປັນຫົວໜ້າຂອງຕະກຸນ ເອໂດມ (ຄື ເອຊາວ ບິດາຂອງ ເອໂດມ) ຕາມ
ທີ່ຢູ່ໃນເຂດທີ່ເປັນກຳມະສິດຂອງເພິ່ນ.

# ບົດທີ 37

1ຢາໂຄບ ໄດ້ອາໄສຢູ່ໃນປະເທດ ການາອານ ບ່ອນທີ່ພໍ່ຂອງຕົນ ເຄີຍອາໄສຢູ່ແຕ່ກ່ອນນັ້ນ
ເລື້ອຍໆມາ.

## ໂຢເຊັບແລະພວກອ້າຍ

2ປະຫວັດຄອບຄົວ ຢາໂຄບ ມີດັ່ງນີ້: ໂຢເຊັບ ຊາຍໜຸ່ມອາຍຸ 17 ປີ ເຄີຍໄປລ້ຽງຝູງແກະ
ແລະແບ້ນຳພວກອ້າຍ ຄືພວກລູກຊາຍຂອງນາງ ບິນຮາ ແລະນາງ ຊີລະປາ ເມຍນ້ອຍຂອງພໍ່ຢູ່
ສະເໝີ ລາວໄດ້ຟ້ອງການກະທຳຊົ່ວຂອງພວກອ້າຍສູ່ພໍ່ຟັງເລື້ອຍໆ.
3ອິສຣາເອນ ຜູ້ເປັນພໍ່ ຊຶ່ງຮັກ ໂຢເຊັບ ຫລາຍກວ່າລູກຊາຍຄົນອື່ນໆ ເພາະວ່າເພິ່ນໄດ້ລາວ
ເມື່ອເວລາເຖົ້າແລ້ວ ເພິ່ນໄດ້ຕັດເສື້ອລ່າມມີແຂນຍືນໜຶ່ງໃຫ້ລາວ. 4ເມື່ອພວກອ້າຍເຫັນດັ່ງນັ້ນ
ກໍອິດສາ ແລະຊັງ ໂຢເຊັບ ຫລາຍທີ່ສຸດຈົນບໍ່ເວົ້າຈາປາໄສນຳລາວຢ່າງທີ່ເຄີຍສະໜິດສະໜົມຄື
ແຕ່ກ່ອນ.
5-7ມື້ໜຶ່ງ ໂຢເຊັບ ໄດ້ເລົ່າຄວາມຝັນສູ່ພວກອ້າຍຟັງວ່າ, “ຂ້ອຍຝັນເຫັນພວກອ້າຍກັບຂ້ອຍ
ກຳລັງພາກັນມັດເຂົ້າຢູ່ທົ່ງນາ ເມື່ອມັດແລ້ວ ມັດເຂົ້ານັ້ນກໍຕັ້ງຂຶ້ນ ມັດເຂົ້າຂອງພວກອ້າຍກໍມາ
ລ້ອມມັດເຂົ້າຂ້ອຍເປັນວົງມົນ ແລ້ວກໍລົ້ມລົງຕໍ່ໜ້າມັດເຂົ້າຂ້ອຍ.” 8ພວກອ້າຍຈຶ່ງຖາມວ່າ, “ເຈົ້າ
ຄິດວ່າເຈົ້າຈະໄດ້ເປັນກະສັດປົກຄອງພວກເຮົາຊັ້ນບໍ?” ຍ້ອນຄວາມຝັນທີ່ໄດ້ເລົ່າມານັ້ນເອງ
ພວກອ້າຍຈຶ່ງພາກັນຊັງລາວຫລາຍຍິ່ງຂຶ້ນ.
9ຕໍ່ມາ ໂຢເຊັບ ກໍຝັນອີກ ລາວຈຶ່ງເລົ່າຄວາມຝັນສູ່ພວກອ້າຍຟັງອີກວ່າ, “ເທື່ອນີ້ ຂ້ອຍຝັນເຫັນ
ຕາເວັນແລະເດືອນ ພ້ອມກັບດວງດາວສິບເອັດດວງຂາບໄຫວ້ຂ້ອຍ.” 10ເມື່ອລາວເລົ່າຄວາມຝັນ
ສູ່ພໍ່ ແລະພວກອ້າຍຟັງ ພໍ່ຈຶ່ງຫ້ວງລາວວ່າ, “ເຈົ້າມາຊ່າງຝັນແທ້! ເຈົ້າຄິດວ່າພໍ່ແມ່ແລະອ້າຍ
ຂອງເຈົ້າຈະພາກັນໄປຂາບໄຫວ້ເຈົ້າຊັ້ນບໍ? 11ພວກອ້າຍຈຶ່ງພາກັນອິດສາ ໂຢເຊັບ ຫລາຍຂຶ້ນອີກ
ແຕ່ ອິສຣາເອນ ຜູ້ເປັນພໍ່ໄດ້ຈື່ຈຳຄວາມຝັນຂອງ ໂຢເຊັບ ນີ້ໄວ້.

## ໂຢເຊັບຖືກຂາຍໄປປະເທດເອຢິບ

12ພວກອ້າຍຂອງ ໂຢເຊັບ ໄດ້ພາກັນໄປລ້ຽງສັດ ໃຫ້ພໍ່ທີ່ເຂດ ເຊເຄັມ. 13ອິສຣາເອນ ເວົ້າຕໍ່
ໂຢເຊັບ ວ່າ, “ພວກອ້າຍເຈົ້າໄດ້ໄປລ້ຽງສັດຢູ່ທີ່ ເຊເຄັມ ພຸ້ນ ຮີບຟ້າວຕຽມຕົວສາ ພໍ່ຈະສົ່ງເຈົ້າໄປ
ຫາພວກເຂົາ” ໂຢເຊັບ ຕອບວ່າ, “ໂດຍ ຂ້ານ້ອຍພ້ອມແລ້ວ.” 14ພໍ່ເວົ້າຕື່ມອີກວ່າ “ໃຫ້ເຈົ້າໄປ
ເບິ່ງພວກອ້າຍດູວ່າພວກເຂົາພາກັນຢູ່ກິນຢ່າງໃດ ແລະໄປເບິ່ງຝູງສັດຂອງເຮົາອີກວ່າຍັງຢູ່ດີບໍ
ແລ້ວໃຫ້ເຈົ້າກັບມາບອກພໍ່” ເມື່ອພໍ່ບອກແລ້ວ ໂຢເຊັບ ຈຶ່ງອອກເດີນທາງຈາກຮ່ອມພູ ເຮັບໂຣນ
ບ່ອນທີ່ພໍ່ອາໄສຢູ່ໄປຫາພວກອ້າຍ ເມື່ອ ໂຢເຊັບ ມາເຖິງ ເຊເຄັມ
15ຂະນະທີ່ລາວຍ່າງໄປມາຢູ່ໃນເຂດນັ້ນ ມີຊາຍຄົນໜຶ່ງມາພົບລາວ ແລະຖາມລາວວ່າ, “ເຈົ້າ

ຊອກຫາໃຜ?” 16ໂຢເຊັບ ຕອບວ່າ, “ຂ້ອຍຊອກຫາອ້າຍຂ້ອຍ ກະລຸນາບອກຂ້ອຍແດ່ວ່າພວກ
ເຂົາເຈົ້າລ້ຽງສັດຢູ່ບ່ອນໃດ?” 17ຊາຍຄົນນັ້ນເວົ້າວ່າ, “ເຂົາເຈົ້າໜີໄປຈາກທີ່ນີ້ແລ້ວ ຂ້ອຍໄດ້ຍິນ
ພວກເຂົາເຈົ້າເວົ້າວ່າຈະໄປ ໂດທານ” ດັ່ງນັ້ນ ໂຢເຊັບ ຈຶ່ງຕິດຕາມໄປຫາພວກອ້າຍ ແລະພົບພວກ
ເຂົາຢູ່ທີ່ນັ້ນ.

18ພວກອ້າຍຫລຽວເຫັນ ໂຢເຊັບ ມາແຕ່ໄກໆ ພວກ ເຂົາຈຶ່ງວາງແຜນຂ້າລາວ. 19-20ມີຜູ້ໜຶ່ງ
ໃນຈຳນວນພວກອ້າຍ ເວົ້າວ່າ, “ຄົນຊ່າງຝັນມານີ້ແລ້ວ ບັດນີ້ ພວກເຮົາພາກັນຂ້າມັນເທາະ
ແລະ ໂຍນສົບມັນລົງສ້າງ ແລ້ວພວກໝູ່ເຮົາຈຶ່ງພາກັນເວົ້າວ່າ ສັດຮ້າຍກັດກິນມັນ ແລ້ວເຮົາກໍ
ຈະໄດ້ຄອຍເບິ່ງວ່າຄວາມຝັນຂອງມັນນັ້ນຈະເປັນໄປໄດ້ບໍ.”

21ເມື່ອ ຣູເບັນ ໄດ້ຍິນພວກອ້າຍເວົ້າດັ່ງນັ້ນ ກໍພະຍາຍາມຊອກຫາວິທີຊ່ອຍ ໂຢເຊັບ. 22ລາວ
ເວົ້າວ່າ, “ຢ່າຕີຢ່າຂ້າມັນເທາະ ພຽງແຕ່ໂຍນມັນລົງໃນສ້າງບ່ອນຖິ່ນກັນດານນີ້ກໍພໍແລ້ວ” ລາວ
ເວົ້າເຊັ່ນນີ້ ກໍເພື່ອຈະຊ່ອຍເຫລືອ ໂຢເຊັບ ໃຫ້ພົ້ນຈາກເງື້ອມມືຂອງພວກເຂົາ ແລ້ວກໍຈະສົ່ງລາວ
ເມືອຫາພໍ່.

23ພໍ ໂຢເຊັບ ມາຮອດບ່ອນທີ່ພວກເຂົາຢູ່ ພວກເຂົາກໍກຸມແກ້ເສື້ອລ່າມມີແຂນຂອງລາວອອກ.
24ແລ້ວຈັບລາວ ໂຍນລົງໃນສ້າງທີ່ບໍ່ມີນໍ້າ.

25ແລ້ວພວກເຂົາກໍພາກັນມານັ່ງກິນເຂົ້າ ໃນທັນໃດນັ້ນ ພວກເຂົາກໍເຫັນພວກອິດຊະມາເອນ
ກຳລັງເດີນທາງມາຈາກເມືອງ ກິເລອາດ ພວກເຂົາໃຊ້ອູດຕ່າງຢາງໄມ້ຫອມ ແລະເຄື່ອງເທດໄປ
ຂາຍທີ່ປະເທດ ເອຢິບ. 26ຢູດາ ເວົ້າຕໍ່ພວກອ້າຍວ່າ, “ຖ້າໝູ່ເຮົາຂ້າມັນ ແລະອຳຄວາມຜິດໄວ້ ໝູ່
ເຮົາຈະໄດ້ຫຍັງ? 27ໝູ່ເຮົາພາກັນຂາຍມັນໃຫ້ພວກ ອິດຊະມາເອນ ຈະບໍ່ດີກວ່າບໍ? ຖ້າເຮັດຢ່າງ
ຂ້ອຍວ່ານີ້ ກໍບໍ່ຕ້ອງຂ້າຕີມັນ ເຖິງຢ່າງໃດມັນກໍເປັນນ້ອງຂອງພວກເຮົາ ແລະເປັນເລືອດເນື້ອ
ເຊື້ອໄຂອັນດຽວກັນ” ພວກອ້າຍທຸກຄົນກໍເຫັນພ້ອມ. 28ເມື່ອພໍ່ຄ້າຜູ້ໜຶ່ງອີກຄືຊາວ ມີດີອານ ມາ
ເຖິງ ພວກເຂົາກໍດຶງເອົາ ໂຢເຊັບ ຂຶ້ນມາຈາກສ້າງ ແລ້ວຂາຍຕໍ່ໃຫ້ພວກພໍ່ຄ້າຊາວ ອິດຊະມາເອນ
ເປັນເງິນຈຳນວນຊາວຫລຽນ ພໍ່ຄ້າໄດ້ພາ ໂຢເຊັບ ໄປຍັງປະເທດ ເອຢິບ.

29ເມື່ອ ຣູເບັນ ກັບໄປເບິ່ງນໍ້າສ້າງບໍ່ເຫັນ ໂຢເຊັບ ຢູ່ໃນນັ້ນ ລາວຈຶ່ງຈີກເຄື່ອງນຸ່ງຂອງຕົນດ້ວຍ
ຄວາມເສຍໃຈ. 30ລາວກັບມາຫາພວກນ້ອງ ແລະເວົ້າວ່າ, “ບໍ່ເຫັນ ໂຢເຊັບ ໃນສ້າງ ຂ້ອຍຈະ
ເຮັດແນວໃດດີ?” 31ຕໍ່ມາ ພວກເຂົາໄດ້ຂ້າແບ້ ແລະເອົາເລືອດທາໃສ່ເສື້ອລ່າມຂອງ ໂຢເຊັບ
32ແລ້ວກໍພາກັນຖືເສື້ອໄປຫາພໍ່ ແລະເວົ້າວ່າ, “ພວກຂ້ານ້ອຍໄດ້ພົບເສື້ອນີ້ ຈົ່ງກວດເບິ່ງດູວ່າ
ແມ່ນຂອງລູກຊາຍພໍ່ ຫລືບໍ່?”

33ອິສຣາເອນ ຈື່ເສື້ອນັ້ນໄດ້ ແລະເວົ້າວ່າ, “ແມ່ນແລ້ວ ເສື້ອຂອງ ໂຢເຊັບ ລູກຊາຍຂ້ອຍສັດ
ຮ້າຍໄດ້ກັດກິນມັນຈົນເຖິງແກ່ຄວາມຕາຍ.” 34ຢາໂຄບ ຈີກເສື້ອຕົນເອງແລ້ວເອົາຜ້າດຳຄຽນແອວ
ດ້ວຍຄວາມໂສກເສົ້າເສຍໃຈເພິ່ນໄວ້ທຸກໃຫ້ແກ່ລູກຊາຍເປັນຫລາຍມື້. 35ລູກຊາຍແລະລູກສາວ
ທຸກຄົນກໍເວົ້າອອຍພໍ່ ແຕ່ເພິ່ນບໍ່ຍອມຟັງສຽງໃຜໝົດ ເພິ່ນເວົ້າວ່າ, “ກູຈະໄວ້ທຸກໃຫ້ລູກຊາຍກູ
ຈົນກວ່າຈະຕາຍຕາມມັນໄປ.”

36ສະນັ້ນ ເພິ່ນຈຶ່ງໄວ້ທຸກໃຫ້ລູກຊາຍຕໍ່ໄປ ໃນເວລາດຽວກັນນັ້ນຊາວ ມີດີອານ ກໍຂາຍ ໂຢເຊັບ

ໃຫ້ໂປຕີຟາ ນາຍທະຫານຮັກສາການຂອງກະສັດຟາຣາໂອ ໃນປະເທດເອຢິບ.

# ບົດທີ 38

## ຢູດາແລະຕາມາ

1ໃນຄາວນັ້ນ ຢູດາໄດ້ໜີຈາກພວກອ້າຍນ້ອງໄປອາໄສຢູ່ນຳຄົນຜູ້ໜຶ່ງຊື່ ຮີຣາ ລາວມາຈາກ
ເມືອງອະດຸລາມ. 2ຢູ່ທີ່ນັ້ນ ຢູດາໄດ້ພົບກັບລູກສາວຂອງຊູອາ ຊາວການາອານ ແລ້ວໄດ້
ແຕ່ງງານກັບນາງ. 3ພວກເຂົາໄດ້ລູກຊາຍຜູ້ໜຶ່ງຊື່ ເອຣະ ຕໍ່ມາ ພວກເຂົາກໍໄດ້ລູກຊາຍອີກຊື່
ໂອນານ. 4-5ພວກເຂົາໄດ້ລູກຊາຍອີກເປັນຄົນທີສາມ ແລະໃສ່ຊື່ໃຫ້ວ່າ ເຊລາ ເມື່ອໄດ້ເດັກ-
ນ້ອຍຜູ້ນີ້ພວກເຂົາໄດ້ອາໄສຢູ່ເມືອງ ເກຊິບ.

6-7ເມື່ອເອຣະ ໃຫຍ່ແລ້ວ ພໍ່ໄດ້ແຕ່ງເມຍໃຫ້ລາວຊື່ນາງຕາມາ ເອຣະເປັນຄົນຊົ່ວປະພຶດຕົນ
ບໍ່ເປັນທີ່ຊອບພຣະໄທຂອງພຣະຜູ້ເປັນເຈົ້າ ແລະພຣະເຈົ້າໄດ້ເຮັດໃຫ້ລາວຕາຍ.

8ເມື່ອເປັນເຊັ່ນນີ້ ຢູດາຈຶ່ງເວົ້າຕໍ່ໂອນານວ່າ, “ຈົ່ງເອົາເມຍອ້າຍເຈົ້າສາ ເພື່ອວ່າຈະໄດ້ສືບ
ເຊື້ອສາຍອ້າຍເຈົ້າໄວ້.” 9ແຕ່ໂອນານຮູ້ວ່າເດັກນ້ອຍຈະບໍ່ແມ່ນລູກຂອງລາວ ສະນັ້ນ ເມື່ອລາວ
ສົມສູ່ກັບນາງເທື່ອໃດ ລາວກໍຈະເຮັດໃຫ້ນໍ້າກາມຕົກເຮ່ຍ ດັ່ງນັ້ນ ລາວຈຶ່ງບໍ່ສືບເຊື້ອສາຍໃຫ້
ອ້າຍ. 10ສິ່ງທີ່ລາວເຮັດນັ້ນກໍບໍ່ເປັນທີ່ຊອບພຣະໄທຂອງພຣະຜູ້ເປັນເຈົ້າ ພຣະເຈົ້າຈຶ່ງໄດ້ເຮັດ
ໃຫ້ລາວຕາຍຄືກັນ.

11ຕໍ່ມາຢູດາເວົ້າຕໍ່ຕາມາລູກສະໃພ້ຂອງຕົນວ່າ, “ຈົ່ງກັບຄືນເມືອບ້ານພໍ່ຂອງເຈົ້າ ແລະໃຊ້ຊີ-
ວິດຍິງໝ້າຍສາ ເພື່ອລໍຖ້າຊານຊາ ເຊລາໃຫຍ່” ເພິ່ນເວົ້າເຊັ່ນນີ້ກໍເພາະຢ້ານວ່າເຊລາອາດຈະ
ຖືກຂ້າຄືກັນກັບອ້າຍຂອງລາວ ດັ່ງນັ້ນ ຕາມາຈຶ່ງກັບເມືອຢູ່ບ້ານພໍ່ຂອງຕົນ.

12ຕໍ່ມາ ເມຍຂອງຢູດາຊຶ່ງເປັນລູກສາວຂອງຊູອາກໍເສຍຊີວິດ ເມື່ອຢູດາໝົດກຳນົດໄວ້ທຸກ
ແລ້ວ ເພິ່ນ ແລະຮີຣາຊາວອະດຸລາມ ໝູ່ຂອງເພິ່ນກໍພາກັນໄປບ່ອນຕັດຂົນແກະຂອງຕົນທີ່
ເມືອງຕິມນາ. 13ເວລານັ້ນມີຄົນມາບອກຕາມາວ່າ, “ພໍ່ປູ່ຂອງເຈົ້າກຳລັງຈະໄປຕັດຂົນແກະທີ່
ເມືອງຕິມນາ.” 14ດັ່ງນັ້ນນາງຈຶ່ງປ່ຽນເຄື່ອງໄວ້ທຸກເອົາຜ້າປົກໜ້າໄວ້ແລ້ວໄປນັ່ງຢູ່ທາງເຂົ້າບ້ານ
ເອນາຢິມ ບ່ອນທາງທີ່ຈະໄປເມືອງຕິມນາ ນາງຮູ້ວ່າເຊລາກໍໃຫຍ່ຂຶ້ນແລ້ວ ແຕ່ນາງຍັງບໍ່ທັນ
ໄດ້ແຕ່ງງານກັບລາວເທື່ອ.

15ເມື່ອຢູດາເຫັນນາງ ເພິ່ນກໍຄິດວ່ານາງເປັນຍິງຫາເງິນ ກໍຍ້ອນວ່ານາງເອົາຜ້າປົກໜ້າໄວ້.
16ເພິ່ນຈຶ່ງເຂົ້າໄປຫານາງທີ່ແຄມທາງ ແລະເວົ້າວ່າ, “ນ້ອງສາວໄປກັບອ້າຍເທາະ” ເພິ່ນບໍ່ຮູ້ຈັກ
ວ່ານາງເປັນລູກສະໃພ້ຂອງຕົນ ນາງຈຶ່ງເວົ້າວ່າ, “ອ້າຍຈະໃຫ້ຫຍັງນ້ອງ?” 17ເພິ່ນຕອບວ່າ,
“ອ້າຍຈະເອົາລູກແບ້ຈາກຝູງສິ່ງມາໃຫ້ເຈົ້າໂຕໜຶ່ງ” ນາງຕອບວ່າ, “ຕົກລົງ ແຕ່ອ້າຍຈະຕ້ອງ
ມອບຂອງມັດຈຳແກ່ນ້ອງ ຈົນກວ່າອ້າຍຈະສົ່ງລູກແບ້ມາໃຫ້”. 18ເພິ່ນຕອບນາງວ່າ, “ອ້າຍຈະ
ເອົາຫຍັງໃຫ້ນ້ອງເປັນຂອງມັດຈຳ” ນາງຕອບວ່າ, “ກາທີ່ມີເຊືອກຫ້ອຍ ແລະໄມ້ຄ້ອນເທົ້າທີ່
ອ້າຍກຳລັງຖືຢູ່ນັ້ນເດ.” ເພິ່ນກໍເອົາຂອງເຫລົ່ານັ້ນໃຫ້ນາງ ແລ້ວທັງສອງກໍໄດ້ໄປນອນນຳກັນ
19ຄັນແລ້ວ ຕາມາກໍລຸກໜີໄປ ນາງເອົາຜ້າປົກໜ້າອອກແລ້ວນຸ່ງເຄື່ອງໄວ້ທຸກຄືເກົ່າ ຕໍ່ມານາງກໍ

ຮູ້ສຶກຖືພາ.
20ຢູ່ຕໍ່ມາ ຢູດາ ສົ່ງໝູ່ຂອງຕົນຊາວ ອະດຸລາມ ໃຫ້ນຳລູກແບ້ໄປໄຖ່ເອົາຂອງມັດຈຳຈາກຍິງ
ຄົນນັ້ນ ແຕ່ບໍ່ພົບນາງ. 21ລາວໄດ້ຖາມຄົນແຖວນັ້ນວ່າ, “ຍິງຫາເງິນຊຶ່ງນັ່ງຢູ່ແຄມທາງໄປບ້ານ
ເອນາຢິມ ຢູ່ໃສ?” ພວກເຂົາຕອບວ່າ, “ຢູ່ທີ່ນີ້ບໍ່ເຄີຍມີຜູ້ຍິງຫາເງິນ.” 22ສະນັ້ນ ລາວຈຶ່ງກັບຄືນ
ເມືອຫາ ຢູດາ ແລະເວົ້າຕໍ່ເພິ່ນວ່າ, “ຂ້ອຍບໍ່ພົບນາງ ເຂົາເຈົ້າຍັງເວົ້າວ່າຢູ່ທີ່ນັ້ນບໍ່ເຄີຍມີຍິງປະ-
ເພດນັ້ນເລີຍ.” 23ຢູດາ ເວົ້າວ່າ, “ຖ້າເປັນເຊັ່ນນີ້ ຢ່າພະຍາຍາມເອົາສິ່ງຂອງເຫລົ່ານັ້ນກັບຄືນມາ
ຢ້ານຄົນທັງຫລາຍຈະໝິ່ນປະໝາດພວກເຮົາ ຂ້ອຍໄດ້ສົ່ງລູກແບ້ໂຕນີ້ໄປໃຫ້ນາງແລ້ວ ແຕ່ເຈົ້າ
ກໍຊອກນາງບໍ່ພົບ.”
24ຢູ່ມາອີກປະມານສາມເດືອນ ມີຄົນຜູ້ໜຶ່ງມາບອກ ຢູດາ ວ່າ, “ດຽວນີ້ ຕາມາ ລູກສະໃພ້ຂອງ
ເຈົ້າຖືກເຂົາຫລິ້ນມີລູກເສຍແລ້ວ” ຢູດາ ຈຶ່ງສັ່ງວ່າ, “ເອົານາງອອກມາຂ້າງນອກ ແລະເອົາໄຟ
ເຜົານາງໃຫ້ຕາຍສາ.” 25ເມື່ອພວກເຂົາເອົານາງອອກມາຂ້າງນອກ ນາງກໍສົ່ງຄົນໄປບອກກັບພໍ່
ປູ່ວ່າ, “ຂ້ອຍຖືພານຳຄົນທີ່ມີຂອງເຫລົ່ານີ້ ຈົ່ງເບິ່ງກາທີ່ເຊືອກຫ້ອຍ ແລະໄມ້ຄ້ອນເທົ້ານີ້ວ່າເປັນ
ຂອງໃຜ?” 26ຢູດາ ເບິ່ງຂອງເຫລົ່ານັ້ນແລະເວົ້າວ່າ, “ນາງເຮັດຖືກຕ້ອງແລ້ວ ຂ້ອຍກໍແມ່ນຜູ້ໜຶ່ງ
ທີ່ໄດ້ເຮັດຜິດພາດ ຂ້ອຍຄວນຈະໃຫ້ນາງແຕ່ງງານກັບ ເຊລາ ລູກຊາຍຂອງຂ້ອຍ” ຕໍ່ນັ້ນມາ ຢູ-
ດາ ກໍບໍ່ໄດ້ສົມສູ່ກັບນາງອີກ.
27ຢູ່ມາເມືອເຖິງເວລາກຳນົດອອກລູກ ກໍຮູ້ວ່າລູກໃນທ້ອງນັ້ນເປັນລູກຝາແຝດ. 28ເມື່ອນາງ
ຕາມາ ກຳລັງເບັ່ງລູກອອກ ລູກຜູ້ໜຶ່ງເອົາມືອອກມາ ນາງຜະດຸງຄັນກໍຈັບມື ແລ້ວເອົາດ້າຍສີ-
ແດງມັດໄວ້ ແລ້ວເວົ້າວ່າ, “ຜູ້ນີ້ອອກກ່ອນ.” 29ແຕ່ລູກນ້ອຍນັ້ນຫົດມືເຂົ້າຄືນ ແລະນ້ອງຂອງ
ລາວຈຶ່ງເກີດກ່ອນຈຶ່ງໄດ້ໃສ່ຊື່ໃຫ້ວ່າ ເປເຣັດ. 30ແລ້ວອ້າຍຂອງລາວຈຶ່ງອອກມາໂດຍມີຝ້າສີ-
ແດງມັດມື ເພິ່ນຈຶ່ງໄດ້ໃສ່ຊື່ໃຫ້ວ່າ ເຊຣາ.

# ບົດທີ 39

## ໂຢເຊັບແລະເມຍຂອງໂປຕີຟາ

1ໂຢເຊັບ ໄດ້ຖືກພາຕົວມາຮອດປະເທດ ເອຢິບ ພວກ ອິດຊະມາເອນ ຜູ້ທີ່ໄດ້ຊື້ລາວມາກໍຂາຍ
ໂຢເຊັບ ຕໍ່ໃຫ້ຊາວ ເອຢິບ ຊື່ ໂປຕີຟາ ຊຶ່ງເປັນນາຍທະຫານ ທີ່ຮັກສາພະລາຊະວັງຂອງ ຟາຣາ-
ໂອ. 2ພຣະຜູ້ເປັນເຈົ້າ ໄດ້ຊ່ອຍ ໂຢເຊັບ ໂດຍບັນດານທຸກສິ່ງທຸກຢ່າງໃຫ້ເກີດເປັນຜົນດີແກ່ລາວ
ລາວໄດ້ອາໄສຢູ່ເຮືອນຂອງ ໂປຕີຟາ ນາຍຂອງລາວ. 3ເມື່ອ ໂປຕີຟາ ເຫັນວ່າ ພຣະຜູ້ເປັນເຈົ້າ ຊົງ
ຊ່ອຍ ໂຢເຊັບ ໂດຍຊົງໃຫ້ທຸກສິ່ງທຸກຢ່າງທີ່ລາວເຮັດເກີດເປັນຜົນສຳເລັດ. 4ເພິ່ນຈຶ່ງພໍໃຈກັບ
ວຽກການທີ່ ໂຢເຊັບ ໄດ້ເຮັດ ດັ່ງນັ້ນເພິ່ນຈຶ່ງມອບເຮືອນ ແລະທຸກສິ່ງທີ່ເພິ່ນມີໃຫ້ລາວເບິ່ງແຍງ
ແລະຮັບຜິດຊອບ. 5ຍ້ອນ ໂຢເຊັບ ພຣະຜູ້ເປັນເຈົ້າ ຈຶ່ງຊົງອວຍພອນເຮືອນຫລັງນັ້ນ ພຣະອົງຊົງ
ອວຍພອນໃຫ້ທຸກສິ່ງທຸກຢ່າງທີ່ ໂປຕີຟາ ມີໃນເຮືອນ ແລະໃນທົ່ງນາຈະເລີນຂຶ້ນ. 6ກໍເພາະວ່າ
ໂປຕີຟາ ໄດ້ມອບຊັບສິ່ງຂອງທຸກຢ່າງໃຫ້ ໂຢເຊັບ ເບິ່ງແຍງຮັກສາແທນ ສະນັ້ນເພິ່ນຈຶ່ງບໍ່ໄດ້ມີ
ຄວາມກັງວົນສົນໃຈຫຍັງເລີຍ ເວັ້ນໄວ້ແຕ່ອາຫານປະຈຳວັນເທົ່ານັ້ນ.

ໂຢເຊັບ ເປັນຊາຍໜຸ່ມທີ່ມີຮູບຮ່າງສົມສ່ວນ ແລະມີໜ້າຕາງາມ. [7]ຫລັງຈາກນັ້ນມາບໍ່ເຫິງເທົ່າ-
ໃດ ເມຍຂອງໂປຕີຟາກໍສົນໃຈ ແລະເກີດສະເໜ່ຫາໃນຕົວຂອງໂຢເຊັບ ນາງຈຶ່ງເວົ້າກັບລາວ
ວ່າ, "ມານອນນຳຂ້ອຍເທາະ." [8]ໂຢເຊັບປະຕິເສດ ແລະຕອບນາງວ່າ, "ນາຍຂອງຂ້ານ້ອຍເພິ່ນ
ບໍ່ໄດ້ກັງວົນສົນໃຈນຳສິ່ງໜຶ່ງສິ່ງໃດເລີຍຢູ່ໃນເຮືອນນີ້ ກໍຍ້ອນເພິ່ນໄວ້ເນື້ອເຊື່ອໃຈຂ້ານ້ອຍ.
[9]ເພິ່ນໄດ້ໃຫ້ຂ້ານ້ອຍຮັບຜິດຊອບໃນສິ່ງທີ່ເພິ່ນມີ ຂ້ານ້ອຍມີອຳນາດໃນເຮືອນຫລັງນີ້ເທົ່າໆກັນ
ກັບເພິ່ນ ເພິ່ນບໍ່ເຄີຍຫວງຫ້າມຂ້ານ້ອຍໃນການກະທຳໃດໆເລີຍ ເວັ້ນໄວ້ແຕ່ຍານາງທີ່ເປັນເມຍ
ຂອງເພິ່ນ ຂ້ານ້ອຍຈະກ້າເຮັດຜິດປະເວນີ ແລະເຮັດສິ່ງທີ່ຊົ່ວຊ້າຢ່າງນີ້ຕໍ່ໜ້າພຣະເຈົ້າໄດ້ຢ່າງ-
ໃດ." [10]ເຖິງແມ່ນນາງຈະຂໍຮ້ອງໂຢເຊັບມື້ແລ້ວມື້ອີກໃຫ້ໄປນອນກັບນາງ ແຕ່ໂຢເຊັບກໍບໍ່ຍອມ
ຟັງ.

[11]ຕໍ່ມາມື້ໜຶ່ງ ເມື່ອໂຢເຊັບເຂົ້າໄປເຮັດວຽກໃນເຮືອນຂອງນາຍ ຊຶ່ງມື້ນັ້ນບໍ່ມີຄົນໃຊ້ຈັກຄົນຢູ່
ໃນເຮືອນເລີຍ. [12]ເມຍຂອງນາຍຈຶ່ງສວຍໂອກາດນັ້ນຈ່ອງເສື້ອຂອງລາວໄວ້ແລ້ວເວົ້າວ່າ, "ໄປ
ນອນກັບຂ້ອຍເທາະ" ແຕ່ໂຢເຊັບພະຍາຍາມເອົາຕົວລອດຫລົບໜີອອກໄປຂ້າງນອກ ໂດຍປະ
ເສື້ອນອກໄວ້ຄາມືຂອງນາງ. [13]ເມື່ອນາງເຫັນໂຢເຊັບປະເສື້ອໄວ້ ແລະແລ່ນອອກໄປຈາກ
ເຮືອນ. [14]ນາງກໍເປັ່ງສຽງຮ້ອງໃສ່ຄົນໃນເຮືອນວ່າ, "ເບິ່ງນີ້ແມ ຜົວຂ້ອຍໄດ້ເອົາຄົນຕ່າງດ້າວ
ຊາວເຮັບເຣີມາຢູ່ໃນເຮືອນ ແລະບັດນີ້ມັນໄດ້ດູໝິ່ນປະໝາດເຮົາ ມັນໄດ້ເຂົ້າມາໃນຫ້ອງນອນ
ຂອງຂ້ອຍ ແລະບອກຂ້ອຍໃຫ້ໄປນອນກັບມັນ. [15]ແຕ່ຍ້ອນຂ້ອຍຮ້ອງຈົນສຸດແຮງ ມັນຈຶ່ງຟ້າວ
ແລ່ນອອກໜີມາຂ້າງນອກ ໂດຍໄດ້ປະເສື້ອນອກຂອງມັນໄວ້."

[16-17]ນາງໄດ້ເກັບເສື້ອນອກຂອງໂຢເຊັບໄວ້ຈົນຜົວກັບມາເຮືອນແລ້ວ ນາງຈຶ່ງເລົ່າເລື່ອງທີ່
ເກີດຂຶ້ນນັ້ນໃຫ້ຜົວຟັງວ່າ, "ຄົນໃຊ້ຄົນຕ່າງດ້າວຊາວເຮັບເຣີທີ່ເຈົ້າເອົາມາຢູ່ນຳນັ້ນເຂົ້າມາຂົ່ມ-
ຂືນຂ້ອຍໃນຫ້ອງນອນ. [18]ແຕ່ເມື່ອຂ້ອຍຮ້ອງຂຶ້ນ ມັນຈຶ່ງແລ່ນໜີອອກໄປຂ້າງນອກໂດຍປະເສື້ອ
ຊັ້ນນອກມັນໄວ້."

[19]ເມື່ອນາຍຂອງໂຢເຊັບໄດ້ຍິນເມຍເລົ່າເລື່ອງນີ້ສູ່ຟັງ ກໍຄຽດທັງເວົ້າວ່າ, "ຄົນໃຊ້ຂອງເຈົ້າກ້າ
ເຮັດກັບຂ້ອຍເຖິງປານນີ້ຫວະ?" [20]ເພິ່ນຈຶ່ງສັ່ງຂັງໂຢເຊັບໄວ້ໃນຄຸກບ່ອນທີ່ກະສັດຂັງນັກໂທດ
ລາວຈຶ່ງຖືກຂັງໄວ້ຢູ່ທີ່ນັ້ນ.

[21]ແຕ່ພຣະຜູ້ເປັນເຈົ້າໄດ້ຊົງຊ່ວຍໂຢເຊັບ ແລະຊົງເມດຕາກະລຸນາລາວ ທຳມະໂລງຈຶ່ງມີໃຈ
ກະລຸນາຕໍ່ລາວຫລາຍ. [22]ເພິ່ນໄດ້ມອບໃຫ້ໂຢເຊັບເປັນຜູ້ຕາງໜ້າເບິ່ງແຍງນັກໂທດທັງຫລາຍ
ລາວເປັນຜູ້ຮັບຜິດຊອບວຽກການທຸກໆຢ່າງທີ່ມີຢູ່ໃນຄຸກ. [23]ເພິ່ນບໍ່ໄດ້ກວດກາສິ່ງໃດທີ່ໂຢເຊັບ
ຮັບຜິດຊອບ ເພາະວ່າພຣະເຈົ້າຊົງຊ່ວຍລາວ ແລະຊົງໃຫ້ທຸກສິ່ງທີ່ລາວເຮັດໄດ້ຮັບຜົນສຳເລັດ.

# ບົດທີ 40

## ໂຢເຊັບແກ້ຄວາມຝັນຂອງນັກໂທດ

[1]ຫລັງຈາກນັ້ນມາອີກບໍ່ເຫິງເທົ່າໃດ ຫົວໜ້າພະນັກງານເຮັດເຫລົ້າອະງຸ່ນ ແລະເຂົ້າຈີ່ຂອງ
ກະສັດເອຢິບໄດ້ເຮັດຜິດຕໍ່ນາຍຂອງເຂົາ. [2]ຟາຣາໂອຈຶ່ງບໍ່ພໍພຣະໄທກັບຂ້າລາຊະການທັງສອງ

ຄືນນີ້. [3]ພຣະອົງຈຶ່ງສັ່ງຂັງທັງສອງໃນຄຸກ ໃນເຮືອນຂອງນາຍທະຫານຮັກສາພະລາຊະວັງ ຊຶ່ງ
ເປັນບ່ອນດຽວກັນກັບທີ່ ໂຢເຊັບ ຖືກຂັງໄວ້. [4]ນາຍທຳມະໂລງໄດ້ເອົາ ໂຢເຊັບ ມາເປັນຜູ້ຮັບໃຊ້
ຂ້າລາຊະການທັງສອງຄົນນີ້ ພວກເຂົາຢູ່ໃນຄຸກຮ່ວມກັນເປັນເວລາເຫິງນານເຕີບ. [5]ຄືນໜຶ່ງໃນ
ຫ້ອງຂັງນັ້ນ ຂ້າລາຊະການທັງສອງຂອງ ຟາຣາໂອ ຕ່າງກໍຝັນ ຄວາມຝັນແຕ່ລະຄົນມີຄວາມ
ໝາຍແຕກຕ່າງກັນ. [6]ຕອນເຊົ້າມາເມື່ອ ໂຢເຊັບ ເຂົ້າມາໃນຫ້ອງ ຈຶ່ງສັງເກດເຫັນພວກເຂົາທັງ
ສອງກະວົນກະວາຍໃຈ. [7]ລາວຈຶ່ງຖາມວ່າ, “ມື້ນີ້ ພວກທ່ານມີຄວາມທຸກໃຈເລື່ອງຫຍັງ?”
[8]ພວກເຂົາຕອບວ່າ, “ພວກຂ້ອຍທັງສອງໄດ້ຝັນໃນຄຸກນີ້ ບໍ່ມີໃຜຈະສາມາດແກ້ຄວາມຝັນໄດ້”
ໂຢເຊັບ ຈຶ່ງເວົ້າວ່າ, “ແມ່ນ ພຣະເຈົ້າ ເທົ່ານັ້ນທີ່ຈະແກ້ໄດ້ ໃຫ້ພວກທ່ານເລົ່າຄວາມຝັນສູ່ຂ້ານ້ອຍ
ຟັງເບິ່ງດູ.”

[9]ເມື່ອໄດ້ຍິນດັ່ງນັ້ນ ຫົວໜ້າພະນັກງານເຮັດເຫລົ້າອະງຸ່ນ ຈຶ່ງເລົ່າຄວາມຝັນຂອງຕົນໃຫ້ໂຢ-
ເຊັບ ຟັງວ່າ, “ມີຕົ້ນອະງຸ່ນຕົ້ນໜຶ່ງຢູ່ຕໍ່ໜ້າຂ້ອຍ ແລະມີງ່າສາມງ່າ. [10]ໃນທັນໃດນັ້ນ ງ່າເຫລົ່າ-
ນັ້ນກໍປົ່ງອອກ ດອກກໍບານ ແລະພວງໝາກອະງຸ່ນກໍສຸກເຕັມງ່າ. [11]ຂ້ອຍຍົກຈອກ ຟາຣາໂອ ຂຶ້ນ
ແລະປິດໝາກອະງຸ່ນບີບລົງໃສ່ຈອກນັ້ນ ແລ້ວຖວາຍແດ່ພະອົງ.”

[12]ເມື່ອເລົ່າສຸດແລ້ວ ໂຢເຊັບ ກໍເວົ້າວ່າ, “ຄວາມຝັນທ່ານມີຄວາມໝາຍດັ່ງນີ້ ງ່າສາມງ່ານັ້ນ
ໝາຍເຖິງສາມມື້. [13]ໃນສາມມື້ ຟາຣາໂອ ຈະຊົງອະໄພໂທດໃຫ້ທ່ານ ເມື່ອຊົງປົດປ່ອຍອອກຈາກ
ຄຸກແລ້ວ ຈະຊົງມອບຕຳແໜ່ງເກົ່າໃຫ້ ທ່ານຈະໄດ້ຖວາຍຈອກເຫລົ້າອະງຸ່ນແດ່ພະອົງຄືທີ່ທ່ານ
ເຄີຍໄດ້ປະຕິບັດມາໃນສະໄໝທ່ານຍັງເປັນຫົວໜ້າເຫລົ້າອະງຸ່ນ. [14]ແຕ່ຢ່າລືມຂ້ານ້ອຍເດີ້ ເມື່ອ
ທຸກສິ່ງຮຽບຮ້ອຍໄປໂດຍດີແລ້ວ ຂໍທ່ານກະລຸນາທູນເລື່ອງຂ້ານ້ອຍໃຫ້ ຟາຣາໂອ ຊົງຊາບແດ່
ເພື່ອພະອົງຈະໄດ້ຊົງປ່ອຍຂ້ານ້ອຍອອກຈາກຄຸກນີ້. [15]ອັນທີ່ຈິງ ຂ້ານ້ອຍໄດ້ຖືກເຂົາລັກມາແຕ່
ດິນແດນຊາວ ເຮັບເຣີ ແລະຈົນເຖິງດຽວນີ້ ຂ້ານ້ອຍບໍ່ໄດ້ເຮັດຜິດປະການໃດພໍທີ່ພວກເຂົາຈະຈັບ
ຂ້ານ້ອຍມາຂັງຄຸກໄວ້ຢູ່ແບບນີ້.”

[16]ເມື່ອຫົວໜ້າພະນັກງານເຮັດເຂົ້າຈີ່ເຫັນວ່າ ຄວາມໝາຍຂອງຄວາມຝັນຂອງພະນັກງານ
ເຮັດເຫລົ້າອະງຸ່ນເປັນເລື່ອງດີ ລາວຈຶ່ງເວົ້າຕໍ່ ໂຢເຊັບ ວ່າ, “ຂ້ອຍກໍຝັນຄືກັນ ຄືຝັນວ່າມີຖາດ
ເຂົ້າຈີ່ສາມໃບຢູ່ເທິງຫົວຂ້ອຍ. [17]ຢູ່ໃນຖາດໜ່ວຍເທິງນັ້ນມີຖາດເຂົ້າຈີ່ທຸກໆຊະນິດສຳລັບ ຟາ-
ຣາໂອ ແຕ່ນົກໄດ້ມາກິນເຂົ້າຈີ່ນັ້ນໝົດ.”

[18]ເມື່ອເລົ່າສຸດ ໂຢເຊັບ ຕອບວ່າ, “ຄວາມໝາຍມີດັ່ງນີ້ ຖາດສາມໃບໝາຍເຖິງສາມມື້.
[19]ພາຍໃນສາມມື້ ຟາຣາໂອ ຈະເອົາທ່ານອອກຈາກຄຸກ ແລ້ວຈະສັ່ງແຂວນຄໍທ່ານໄວ້ເທິງຕົ້ນໄມ້
ແລະແຮ້ງທັງຫລາຍຈະບິນມາເຈາະກິນເນື້ອທ່ານ.”

[20]ຫລັງຈາກນັ້ນ ມາສາມມື້ ເປັນວັນເກີດຂອງ ຟາຣາໂອ ພະອົງຊົງຈັດລ້ຽງຂ້າລາຊະການບໍ-
ລິພານຂອງພະອົງ ແລ້ວຊົງປ່ອຍພະນັກງານເຫລົ້າອະງຸ່ນ ແລະຫົວໜ້າພະນັກງານເຮັດເຂົ້າຈີ່
ອອກຈາກຄຸກ ໃຫ້ມາຢືນຢູ່ຕໍ່ໜ້າຂ້າລາຊະການທັງຫລາຍ. [21]ພະອົງຊົງມອບຕຳແໜ່ງເກົ່າຄືນໃຫ້
ພະນັກງານເຮັດເຫລົ້າອະງຸ່ນ ແລ້ວລາວກໍຖວາຍຈອກເຫລົ້າອະງຸ່ນແດ່ພະອົງ. [22]ແລະຊົງສັ່ງ
ແຂວນຄໍພະນັກງານເຮັດເຂົ້າຈີ່ນັ້ນ ທຸກສິ່ງທຸກຢ່າງກໍເປັນໄປຕາມທີ່ ໂຢເຊັບ ໄດ້ແກ້ຄວາມຝັນໃຫ້

ພວກເຂົາຟັງ. [23]ແຕ່ຫົວໜ້າພະນັກງານເຮັດເຫລົ້າອະງຸ່ນບໍ່ໄດ້ນຶກເຖິງໂຢເຊັບ ໂດຍລືມລາວໄປ
ເລີຍ.

## ບົດທີ 41

### ໂຢເຊັບແກ້ຄວາມຝັນຂອງຟາຣາໂອ

[1]ຫລັງຈາກນັ້ນມາສອງປີ ຟາຣາໂອໄດ້ຝັນວ່າ ພຣະອົງໄດ້ຊົງຢືນຢູ່ແຄມແມ່ນໍ້ານິເລ. [2]ໃນ
ຂະນະນັ້ນ ມີງົວແມ່ໂຕຕຸ້ຍພີດີງາມເຈັດໂຕຂຶ້ນມາຈາກແມ່ນໍ້ານິເລແລະໄດ້ກັດກິນຫຍ້າ. [3]ແລ້ວ
ຈຶ່ງມີງົວແມ່ທີ່ຈ່ອຍຜອມ ແລະເປັນໜ້າຂີ້ດຽດອີກເຈັດໂຕຂຶ້ນມາຈາກແມ່ນໍ້ານິເລ ແລະຢືນຢູ່ກັບ
ງົວແມ່ທີ່ຕຸ້ຍພີດີງາມນັ້ນ. [4]ຕໍ່ມາງົວແມ່ຈ່ອຍກໍກືນກິນງົວແມ່ຕຸ້ຍພີດີງາມທັງເຈັດໂຕ ແລ້ວຟາຣາ-
ໂອກໍຊົງຊວາດຮູ້ເມື່ອ.

[5]ພຣະອົງຊົງຫລັບໄປອີກ ແລະຝັນວ່າ ມີຮວງເຂົ້າທີ່ມີເມັດຕຶ່ງດີເຈັດຮວງເກີດຈາກຕົ້ນດຽວ
ກັນ. [6]ແລ້ວກໍມີຮວງເຂົ້າເຈັດຮວງງອກອອກມາເປັນເຂົ້າເມັດລີບຫ່ຽວແຫ້ງ ເພາະຖືກລົມທະເລ-
ຊາຍ. [7]ຮວງເຂົ້າລີບເຈັດຮວງໄດ້ກືນກິນຮວງເຂົ້າເມັດຕຶ່ງເຈັດຮວງນັ້ນ ຟາຣາໂອຈຶ່ງຊົງຊວດຮູ້-
ເມື່ອ ແລະເຫັນວ່າພະອົງຝັນໄປ.

[8]ໃນເຊົ້າມື້ນັ້ນ ພະອົງຊົງວຸ້ນວາຍພະໄທຫລາຍ ຈຶ່ງສັ່ງໃຫ້ຄົນໄປເຊີນໝໍມໍ ແລະນັກປາດໃນ
ປະເທດເອຢິບມາ ພະອົງໄດ້ຊົງເລົ່າຄວາມຝັນໃຫ້ຄົນເຫລົ່ານັ້ນຟັງ ແຕ່ບໍ່ມີໃຜສາມາດແກ້ຄວາມ
ຝັນນັ້ນໄດ້. [9]ຕໍ່ຈາກນັ້ນ ຫົວໜ້າພະນັກງານເຮັດເຫລົ້າອະງຸ່ນ ຈຶ່ງກາບທູນຕໍ່ຟາຣາໂອວ່າ,
"ຂ້ານ້ອຍຄວນສາລະພາບຄວາມຜິດຂອງຂ້ານ້ອຍໃນມື້ນີ້. [10]ເມື່ອພະອົງຊົງພິໂລດຂ້າໃຊ້ຂອງ
ພະອົງ ໂດຍຊົງຮັບສັ່ງຂັງຫົວໜ້າພະນັກງານເຮັດເຂົ້າຈີ່ ແລະຂ້ານ້ອຍໃນຄຸກຂອງທະຫານຮັກ-
ສາພະອົງນັ້ນ. [11]ໃນຄືນໜຶ່ງພວກຂ້ານ້ອຍທັງສອງໄດ້ຝັນ ໂດຍຄວາມໝາຍຂອງຄວາມຝັນນັ້ນກໍ
ກ່ຽວກັບແຕ່ລະບຸກຄົນ. [12]ມີຊາຍໜຸ່ມຊາວເຮັບເຣີຜູ້ໜຶ່ງທີ່ຖືກຂັງຢູ່ນຳພວກຂ້ານ້ອຍ ລາວເປັນ
ຄົນໃຊ້ຂອງນາຍທະຫານຮັກສາພະອົງ ພວກຂ້ານ້ອຍໄດ້ເລົ່າຄວາມຝັນໃຫ້ລາວຟັງ ລາວກໍແກ້-
ຄວາມຝັນຂອງພວກຂ້ານ້ອຍແຕ່ລະຄົນຖືກຕ້ອງ [13]ທຸກສິ່ງໄດ້ເປັນຈິງຕາມທີ່ລາວໄດ້ເວົ້າຄື ຂ້າ-
ນ້ອຍໄດ້ຮັບພະລາຊະທານຕຳແໜ່ງເກົ່າ ແລະຫົວໜ້າພະນັກງານເຮັດເຂົ້າຈີ່ກໍຖືກແຂວນຄໍ."

[14]ຟາຣາໂອຈຶ່ງຮັບສັ່ງໃຫ້ຄົນໄປນຳໂຢເຊັບມາ ພວກເຂົາກໍຟ້າວເອົາລາວອອກຈາກຄຸກ ຫລັງ
ຈາກແຖໜວດ ແລະປ່ຽນເຄື່ອງນຸ່ງແລ້ວ ເຂົາກໍນຳໂຢເຊັບໄປຢືນຢູ່ຕໍ່ພະພັກຂອງຟາຣາໂອ.
[15]ພະອົງຊົງກ່າວຕໍ່ໂຢເຊັບວ່າ, "ເຮົາໄດ້ຝັນ ແລະບໍ່ມີໃຜສາມາດແກ້ຄວາມຝັນນັ້ນໄດ້ ເຮົາຮູ້ມາ
ວ່າ ເມື່ອເຈົ້າໄດ້ຍິນຄວາມຝັນແລ້ວ ເຈົ້າສາມາດແກ້ໄດ້." [16]ໂຢເຊັບຈຶ່ງທູນຕອບວ່າ, "ແຕ່ບໍ່
ແມ່ນຂ້ານ້ອຍດອກ ແມ່ນພຣະເຈົ້າຕ່າງຫາກທີ່ຈະປະທານຄຳຕອບຢ່າງດີແກ່ພະອົງ."

[17]ຟາຣາໂອຊົງກ່າວວ່າ, "ເຮົາໄດ້ຝັນວ່າ ເຮົາໄດ້ຢືນຢູ່ແຄມແມ່ນໍ້ານິເລ. [18]ໃນເວລານັ້ນ ມີ
ງົວແມ່ທີ່ຕຸ້ຍພີດີງາມເຈັດໂຕຂຶ້ນມາຈາກແມ່ນໍ້ານິເລ ແລ້ວໄດ້ກິນຫຍ້າ. [19]ຕໍ່ມາມີງົວແມ່ເຈັດໂຕ
ຊຶ່ງຈ່ອຍຜອມໜ້າຂີ້ດຽດ ແລະໜ້າຢ້ານ ເປັນງົວແມ່ທີ່ໜ້າສັງເວດທີ່ສຸດຊຶ່ງເຮົາບໍ່ເຄີຍເຫັນມາໃນ
ປະເທດເອຢິບ. [20-21]ງົວຈ່ອຍຜອມເຫລົ່ານີ້ໄດ້ກືນກິນງົວໂຕຕຸ້ຍພີ ແຕ່ມັນກິນເວລາໃດບໍ່ມີໃຜຮູ້

ເຫັນ ເພາະງົວເຫລົ່ານັ້ນຍັງຈ່ອຍຜອມຢູ່ຄືເກົ່າ ແລ້ວເຮົາກໍຊວາດຮູ້ເມື່ອ. 22ແຕ່ເມື່ອເຮົາຫລັບໄປ
ອີກ ຍັງໄດ້ຝັນເຫັນຮວງເຂົ້າເມັດຕຶ່ງເຈັດຮວງໃນຕົ້ນເຂົ້າຕົ້ນດຽວກັນ. 23ແລ້ວມີຮວງເຂົ້າເຈັດ
ຮວງ ງອກອອກມາ ແຕ່ເປັນເຂົ້າເມັດລີບ ແລະແຫ້ງ ເພາະຖືກລົມຈາກທະເລຊາຍ. 24ຮວງເຂົ້າ
ເມັດລີບໄດ້ກືນກິນຮວງເຂົ້າເມັດຕຶ່ງ ເຮົາໄດ້ເລົ່າຄວາມຝັນນີ້ໃຫ້ໝໍມໍຟັງ ແຕ່ບໍ່ມີໃຜສາມາດແກ້-
ຄວາມຝັນໄດ້.”
25ໂຢເຊັບ ຈຶ່ງທູນຕໍ່ ຟາຣາໂອ ວ່າ, “ຄວາມຝັນສອງຢ່າງນີ້ມີຄວາມໝາຍຢ່າງດຽວກັນ ພຣະ-
ເຈົ້າ ໄດ້ຊົງບອກໃຫ້ພະອົງຮູ້ຈັກເຖິງສິ່ງທີ່ຈະບັງເກີດຂຶ້ນ. 26ງົວແມ່ຕຸ້ຍພີດີງາມເຈັດໂຕນັ້ນໝາຍ
ເຖິງເຈັດປີ ແລະຮວງເຂົ້າເມັດຕຶ່ງເຈັດຮວງນັ້ນກໍໝາຍເຖິງເຈັດປີຄືກັນ ທັງສອງຢ່າງມີຄວາມ
ໝາຍແບບດຽວກັນ. 27ງົວແມ່ຈ່ອຍຜອມ ແລະເປັນໜ້າຂີ້ດຽດ ຊຶ່ງຂຶ້ນມາຈາກນໍ້າຕາມຫລັງ
ແລະຮວງເຂົ້າເມັດລີບເຈັດຮວງ ຊຶ່ງເຜົາແຫ້ງເພາະລົມຈາກທະເລຊາຍນັ້ນ ແມ່ນເປັນເວລາເຈັດ
ປີທີ່ຈະປະສົບກັບຄວາມອຶດຢາກ. 28ຄວາມຝັນຂອງພະອົງ ແມ່ນຕາມທີ່ຂ້ານ້ອຍໄດ້ກາບທູນນີ້
ພຣະເຈົ້າ ໄດ້ສະແດງໃຫ້ພະອົງຮູ້ເຖິງສິ່ງທີ່ຈະບັງເກີດຂຶ້ນ. 29ໃນທົ່ວດິນແດນຂອງປະເທດ ເອຢິບ
ຈະມີຄວາມອຸດົມສົມບູນພູນສຸກເປັນເວລາເຈັດປີ. 30ຫລັງຈາກນັ້ນມາຈະມີການອຶດຢາກເກີດຂຶ້ນ
ປັນເວລາເຈັດປີອີກ ຄວາມອຸດົມສົມບູນໃນປະເທດ ເອຢິບ ຈະຖືກລົບລ້າງໝົດ. 31ຄວາມອຶດຢາກ
ຈະທຳລາຍປະເທດແທນ ໄລຍະແຫ່ງຄວາມອຸດົມສົມບູນຖືກລົບລ້າງໝົດສິ້ນ ກໍເພາະວ່າຄວາມ
ອຶດຢາກທີ່ຕິດຕາມມານັ້ນຈະຮ້າຍ ແຮງທີ່ສຸດ. 32ສາຍເຫດທີ່ພະອົງຊົງຝັນສອງ ເທື່ອນັ້ນໝາຍ
ຄວາມວ່າ ພຣະເຈົ້າ ຊົງກຳນົດໄລຍະການນີ້ໄວ້ແລ້ວ ແລະພຣະອົງຈະຊົງ ໃຫ້ບັງເກີດຂຶ້ນໃນອະ-
ນາຄົດອັນມໍ່ໆນີ້.
33ບັດນີ້ ພະອົງຈົ່ງຊອກຫາຄົນທີ່ສະຫລຽວສະຫລາດແລະມີສະຕິປັນຍາຄົນໜຶ່ງໄວ້ ແລ້ວຕັ້ງ
ເພິ່ນໃຫ້ເປັນຜູ້ປົກຄອງປະເທດ ເອຢິບ. 34ພະອົງຕ້ອງແຕ່ງຕັ້ງຂ້າລາຊະການປົກຄອງເຂດແຂວງ
ຕ່າງໆຄືກັນ ແລະໃຫ້ເກັບເອົາຜົນລະປູກໜຶ່ງສ່ວນຫ້າໃນລະຫວ່າງເຈັດປີທີ່ອຸດົມສົມບູນນັ້ນໄວ້.
35ໃຫ້ພວກເຂົາສະສົມອາຫານທຸກໆຊະນິດໃນປີທີ່ອຸດົມສົມບູນໄວ້ ແລະປະຕິບັດຕາມພະບັນຊາ
ຂອງພະອົງຄືເກັບເຂົ້າໄວ້ໃນເມືອງຕ່າງໆພາຍໃຕ້ການກວດກາຂອງພະອົງ ແລະຮັກສາໄວ້ໃຫ້ດີ.
36ອາຫານທີ່ເກັບໄວ້ນີ້ຈະເປັນເຄື່ອງບັນເທົາທຸກເວລາອຶດຢາກໃນໄລຍະເຈັດປີທີ່ຈະມາເຖິງນີ້
ເພື່ອປະຊາຊົນຊາວ ເອຢິບ ຈະບໍ່ໄດ້ອຶດເຂົ້າຕາຍ.”

## ໂຢເຊັບຖືກແຕ່ງຕັ້ງໃຫ້ເປັນຜູ້ປົກຄອງປະເທດເອຢິບ

37ຟາຣາໂອ ແລະຂ້າລາຊະການຂອງພະອົງ ເຫັນຊອບໃນແຜນການທີ່ ໂຢເຊັບ ສະເໜີມານັ້ນ.
38ພະອົງຊົງກ່າວຕໍ່ພວກຂ້າລາຊະການວ່າ, “ພວກເຮົາຈະໄປຊອກຫາຄົນ ຊຶ່ງ ພຣະວິນຍານ
ຂອງ ພຣະເຈົ້າ ສະຖິດຢູ່ກັບລາວຄືຄົນນີ້ໄດ້ຢູ່ໃສ?” 39ຟາຣາໂອ ຈຶ່ງກ່າວຕໍ່ ໂຢເຊັບ ວ່າ, “ດ້ວຍວ່າ
ພຣະເຈົ້າ ໄດ້ໂຜດສະແດງສິ່ງຕ່າງໆນີ້ແກ່ເຈົ້າຢ່າງແຈ່ມແຈ້ງ ໂດຍບໍ່ມີໃຜເຂົ້າໃຈ ແລະມີສະຕິ-
ປັນຍາເທົ່າເຈົ້າ. 40ດັ່ງນັ້ນ ເຮົາຈະແຕ່ງຕັ້ງເຈົ້າໃຫ້ເປັນຜູ້ປົກຄອງປະເທດ ແລະປະຊາຊົນທຸກ
ຄົນຈະຕ້ອງເຮັດຕາມຄຳສັ່ງຂອງເຈົ້າ ເຮົາໃຫຍ່ກວ່າເຈົ້າ ກໍເພາະວ່າເຮົາເປັນກະສັດເທົ່ານັ້ນ.”
41ຕໍ່ມາກະສັດຊົງກ່າວກັບ ໂຢເຊັບ ວ່າ, “ບັດນີ້ເຈົ້າກໍຮູ້ແລ້ວວ່າ ເຮົາໄດ້ແຕ່ງຕັ້ງເຈົ້າໃຫ້ເປັນຜູ້

ປົກຄອງປະເທດ ເອຢິບ ແລ້ວ.” 42ຟາຣາໂອ ຊົງຖອດແຫວນກາປະທັບຈາກນິ້ວພະຫັດ ແລ້ວສຸບ
ໃສ່ນິ້ວມືຂອງ ໂຢເຊັບ ເອົາເສື້ອທີ່ງາມທີ່ສຸດໃຫ້ລາວນຸ່ງເອົາສາຍຄໍຄຳຄ້ອງຄໍໃຫ້. 43ແລ້ວພະອົງ
ໃຫ້ລາວຂີ່ລົດພະທີ່ນັ່ງຄັນທີສອງຮອງຈາກຂອງພະອົງ ແລະທະຫານຮັກສາພະອົງຮ້ອງປະກາດ
ວ່າ, “ຈົ່ງຫລີກທາງໃຫ້” ໂຢເຊັບ ໄດ້ຖືກສະຖາປະນາຂຶ້ນໃຫ້ເປັນຜູ້ປົກຄອງປະເທດ ເອຢິບ ໂດຍ
ວິທີດັ່ງກ່າວມານີ້. 44ຟາຣາໂອກ່າວຕໍ່ ໂຢເຊັບວ່າ, “ເຮົາເປັນກະສັດກໍຈິງ ແຕ່ໃນປະເທດ ເອຢິບ
ນີ້ ຜູ້ໃດບໍ່ໄດ້ຮັບອະນຸຍາດຈາກເຈົ້າຈະເຮັດຫຍັງບໍ່ໄດ້.” 45ພະອົງໄດ້ໃສ່ຊື່ໃຫ້ໂຢເຊັບ ໃໝ່ວ່າ,
“ຊາເຟນາດ-ປາເນອາ” ແລະພະອົງໄດ້ປະທານນາງ ອາເສນັດ ລູກສາວຂອງ ໂປຕິເຟຣາ ປະ-
ໂລຫິດເມືອງ ໂອນ ໃຫ້ເປັນເມຍຂອງເພິ່ນ ໂຢເຊັບ ໄດ້ເດີນທາງໄປກວດການທົ່ວປະເທດ ເອຢິບ.
46ໂຢເຊັບ ໄດ້ເຂົ້າຮັບໃຊ້ ຟາຣາໂອ ແຫ່ງປະເທດ ເອຢິບ ເມື່ອອາຍຸໄດ້ສາມສິບປີ ເພິ່ນທູນລາພະ
ອົງ ແລ້ວອອກເດີນທາງໄປກວດການທົ່ວປະເທດຕາງພະເນດ. 47ໃນໄລຍະເຈັດປີທີ່ອຸດົມສົມບູນ
ນັ້ນ ປະເທດ ເອຢິບ ຜະລິດຜົນລະປູກໄດ້ຢ່າງຫລວງຫລາຍ. 48ໂຢເຊັບ ສະສົມອາຫານທຸກໆຊະ-
ນິດໄວ້ໃນໄລຍະເຈັດປີທີ່ອຸດົມສົມບູນ ແລ້ວເອົາໄປເກັບໄວ້ຕາມເມືອງຕ່າງໆ ໃນແຕ່ລະເມືອງນັ້ນ
ເພິ່ນຮີບໂຮມເອົາເຂົ້າທີ່ເກັບໄດ້ຈາກນາອ້ອມແອ້ມມາເກັບໄວ້ໃນຕົວເມືອງ. 49ເພິ່ນສະສົມເຂົ້າໄວ້
ໄດ້ຫລາຍປານເກັບເມັດດິນຊາຍໃນແຄມທະເລ ຫລາຍຈົນບໍ່ສາມາດຊັ່ງຕວງໄດ້
50ກ່ອນປີທີ່ຈະເກີດການອຶດຢາກ ໂຢເຊັບ ມີລູກຊາຍສອງຄົນກັບນາງ ອາເສນັດ ລູກສາວຂອງ
ໂປຕິເຟຣາ ປະໂລຫິດເມືອງ ໂອນ. 51ໂຢເຊັບ ເວົ້າວ່າ, “ພຣະເຈົ້າ ໄດ້ຊົງເຮັດໃຫ້ຂ້ອຍລືມຄວາມ-
ເຈັບຊໍ້ານາໆປະການ ແລະລືມຄອບຄົວຂອງພໍ່ຂ້ອຍທັງໝົດ” ດັ່ງນັ້ນຈຶ່ງໄດ້ຕັ້ງຊື່ໃຫ້ລູກຊາຍກົກ
ວ່າ, “ມານາເຊ.” 52ແລະຍັງໄດ້ເວົ້າຕື່ມອີກວ່າ, “ພຣະເຈົ້າ ໄດ້ປະທານລູກຊາຍໃຫ້ຂ້ອຍໃນປະ-
ເທດທີ່ຂ້ອຍມີຄວາມທຸກໃຈ” ດັ່ງນັ້ນເພິ່ນຈຶ່ງໃສ່ຊື່ລູກຊາຍຄົນທີສອງວ່າ, “ເອຟຣາຢິມ.”
53ຄວາມອຸດົມສົມບູນເປັນເວລາເຈັດປີ ໃນປະເທດ ເອຢິບ ໄດ້ສິ້ນສຸດລົງ. 54ແລະຄວາມອຶດ
ຢາກເປັນເວລາເຈັດປີ ກໍບັງເກີດຂຶ້ນມາແທນຕາມທີ່ໂຢເຊັບ ໄດ້ທຳນວາຍໄວ້ ຢູ່ໃນປະເທດອື່ນໆ
ບໍ່ມີເຂົ້າຈະກິນແລ້ວ ແຕ່ໃນປະເທດ ເອຢິບ ຍັງມີເຂົ້າກິນຢູ່. 55ເມື່ອປະເທດ ເອຢິບ ເລີ່ມຕົ້ນອຶດ
ຢາກ ປະຊາຊົນກໍແຫ່ກັນມາຮ້ອງຂໍອາຫານນຳ ຟາຣາໂອ ພະອົງຈຶ່ງຊົງກ່າວແກ່ພວກເຂົາວ່າ,
“ຈົ່ງໄປຫາ ໂຢເຊັບ ແລະເຮັດຕາມທີ່ລາວບອກ.”
56ເມື່ອຄວາມອຶດຢາກເກີດຂຶ້ນທົ່ວປະເທດ ໂຢເຊັບກໍໄຂສາງເຂົ້າທຸກໆສາງ ແລ້ວຂາຍໃຫ້ແກ່
ປະຊາຊົນ ເອຢິບ. 57ເພາະວ່າການອຶດຢາກຄັ້ງນີ້ຮ້າຍແຮງທີ່ສຸດ ປະຊາຊົນຈາກຫລາຍປະເທດ
ໃນໂລກໄດ້ພາກັນມາປະເທດ ເອຢິບ ເພື່ອຂໍຊື້ເຂົ້ານຳ ໂຢເຊັບ ເພາະວ່າການອຶດຢາກໄດ້ເກີດ
ຂຶ້ນໃນທຸກໆປະເທດທົ່ວໂລກຢ່າງຮ້າຍແຮງ.

# ບົດທີ 42

## ພວກອ້າຍຂອງໂຢເຊັບມາປະເທດເອຢິບເພື່ອຫາຊື້ເຂົ້າ

1ເມື່ອ ຢາໂຄບ ຊາບວ່າຢູ່ໃນປະເທດ ເອຢິບ ຍັງມີເຂົ້າຂາຍ ເພິ່ນຈຶ່ງເວົ້າກັບພວກລູກຊາຍວ່າ
“ເປັນຫຍັງພວກເຈົ້າຈຶ່ງພາກັນຢູ່ຊື່ໆ? 2ຂ້ອຍໄດ້ຍິນວ່າທີ່ປະເທດ ເອຢິບ ມີເຂົ້າຂາຍ ຈົ່ງໄປຊື້ເຂົ້າ

ຢູ່ທີ່ນັ້ນແມ ຖ້າບໍ່ດັ່ງນັ້ນພວກເຮົາຈະອຶດເຂົ້າຕາຍກັນໝົດ.”
[3]ດັ່ງນັ້ນ ພວກອ້າຍໂຢເຊັບທັງສິບຄົນຈຶ່ງພາກັນໄປທີ່ປະເທດເອຢິບເພື່ອຫາຊື້ເຂົ້າ. [4]ຢາໂຄບ
ບໍ່ໄດ້ໃຫ້ເບັນຢາມິນນ້ອງຊາຍຄີງໆຂອງໂຢເຊັບໄປນຳ ເພາະຢ້ານມີອັນຕະລາຍ. [5]ພວກລູກ
ຊາຍຂອງຢາໂຄບ ມາຊື້ເຂົ້າພ້ອມກັນກັບພວກອື່ນໆ ຍ້ອນວ່າໃນປະເທດການາອານມີການອຶດ
ຢາກເກີດຂຶ້ນ.

[6]ໂຢເຊັບໃນຖານະເປັນຜູ້ປົກຄອງປະເທດເອຢິບໄດ້ຂາຍເຂົ້າໃຫ້ແກ່ປະຊາຊົນທຸກໆຊາດໃນ
ປະເທດຕ່າງໆ ດັ່ງນັ້ນພວກອ້າຍຂອງໂຢເຊັບຈຶ່ງເຂົ້າມາຫາ ແລະຂາບລົງຕໍ່ໜ້າເພິ່ນ ເມື່ອໂຢ-
ເຊັບເຫັນພວກອ້າຍກໍຈື່ໄດ້. [7]ແຕ່ເພິ່ນເຮັດທຳທ່າຄືບໍ່ຮູ້ຈັກ ເພິ່ນເວົ້າຢ່າງມີອຳນາດຕໍ່ພວກອ້າຍ
ວ່າ, “ພວກເຈົ້າມາແຕ່ໃສ?” ພວກເຂົາຈຶ່ງຕອບວ່າ, “ພວກຂ້ານ້ອຍມາແຕ່ປະເທດການາອານ
ເພື່ອມາຂໍຊື້ເຂົ້າ.”

[8]ໂຢເຊັບຈື່ພວກອ້າຍຂອງຕົນໄດ້ ແຕ່ພວກເຂົາເຈົ້າຈື່ເພິ່ນບໍ່ໄດ້. [9]ເພິ່ນຍັງຈື່ຈຳຄວາມຝັນທີ່
ຝັນກ່ຽວກັບພວກເຂົາເຈົ້າ ເພິ່ນເວົ້າວ່າ, “ພວກເຈົ້າເປັນນັກສືບ ພວກເຈົ້າມາສືບເບິ່ງຈຸດອ່ອນໃນ
ປະເທດຂອງເຮົາ.”

[10]ພວກເຂົາຈຶ່ງຕອບວ່າ, “ບໍ່ແມ່ນດອກ ອາດຍາເອີຍ ພວກຂ້ານ້ອຍມາໃນຖານະເປັນຜູ້ຮັບ
ໃຊ້ຂອງອາດຍາເພື່ອຂໍຊື້ເຂົ້າ. [11]ທັງໝົດນີ້ເປັນອ້າຍນ້ອງກັນບໍ່ແມ່ນເປັນນັກສືບດອກອາດຍາ
ເອີຍ ພວກຂ້ານ້ອຍເປັນຄົນສັດຊື່.”

[12]ແຕ່ໂຢເຊັບເວົ້າຊ້ຳຢ່າງໜັກແໜ້ນວ່າ, “ຕ້ອງແມ່ນ ພວກເຈົ້າມາສືບເບິ່ງຈຸດອ່ອນໃນປະ-
ເທດຂອງເຮົາ.” [13]ພວກເຂົາເວົ້າວ່າ, “ອາດຍາເອີຍ ພວກຂ້ານ້ອຍມີອ້າຍນ້ອງນຳກັນສິບສອງ
ຄົນ ເກີດຈາກພໍ່ດຽວກັນຢູ່ໃນປະເທດການາອານ ດຽວນີ້ນ້ອງຜູ້ຫລ້າຢູ່ນຳພໍ່ ແລະອ້າຍຂອງຜູ້
ຫລ້າໄດ້ຕາຍໄປແລ້ວ.”

[14]ໂຢເຊັບຕອບເຂົາວ່າ, “ແມ່ນຄືຂ້ອຍເວົ້າແທ້ໆ ພວກເຈົ້າຕ້ອງເປັນນັກສືບອີ່ຫລີ. [15]ສິ່ງນີ້ຈະ
ເປັນເຄື່ອງພິສູດພວກເຈົ້າ ຄືເຮົາຂໍສັນຍາໃນນາມຟາຣາໂອວ່າ ເຮົາຈະບໍ່ປ່ອຍພວກເຈົ້າ ຈົນ
ກວ່ານ້ອງຫລ້າຂອງພວກເຈົ້າຈະມາທີ່ນີ້ ໃຫ້ສົ່ງຜູ້ໜຶ່ງໃນຈຳນວນພວກເຈົ້າໄປເອົາລາວມາ.
[16]ພວກທີ່ເຫລືອນັ້ນຈະຕ້ອງຖືກກັກຂັງໄວ້ ຈົນກວ່າສິ່ງທີ່ພວກເຈົ້າເວົ້າມານັ້ນ ຈະພິສູດເຫັນວ່າ
ເປັນຄວາມຈິງ ຖ້າບໍ່ດັ່ງນັ້ນ ຕາບໃດທີ່ຟາຣາໂອຍັງມີຊີວິດຢູ່ ພວກເຈົ້າກໍຄືງເປັນນັກສືບຢູ່ຕາບ-
ນັ້ນ.” [17]ຍ້ອນເລື່ອງດັ່ງກ່າວນີ້ ໂຢເຊັບຈຶ່ງສັ່ງຂັງພວກເຂົາສາມມື້. [18]ຕໍ່ມາໃນມື້ທີສາມ ໂຢເຊັບ
ຈຶ່ງເວົ້າກັບພວກເຂົາວ່າ, “ຂ້ອຍນະມັດສະການພຣະເຈົ້າ ດັ່ງນັ້ນຖ້າພວກເຈົ້າເຮັດສິ່ງນີ້ໄດ້
ພວກເຈົ້າກໍຈະພົ້ນໂທດ. [19]ຄືຖ້າພວກເຈົ້າເປັນຄົນສັດຊື່ແທ້ ໃຫ້ຜູ້ດຽວເທົ່ານັ້ນໃນຈຳນວນພວກ
ເຈົ້າຢູ່ໃນຄຸກນີ້ ນອກນັ້ນ ໃຫ້ເອົາເຂົ້າທີ່ຊື້ນີ້ເມືອໃຫ້ຄອບຄົວຂອງພວກເຈົ້າທີ່ກຳລັງຫິວຢູ່. [20]ແຕ່
ພວກເຈົ້າຕ້ອງເອົານ້ອງຊາຍຫລ້າມາຫາເຮົາ ເພື່ອພິສູດວ່າພວກເຈົ້າໄດ້ເວົ້າຄວາມຈິງ ແລ້ວ
ພວກເຈົ້າກໍຈະບໍ່ຖືກປະຫານຊີວິດ” ພວກເຂົາກໍຍອມຕົກລົງຕາມຂໍ້ສະເໜີນັ້ນ.

[21]ພວກເຂົາເວົ້າຕໍ່ກັນແລະກັນວ່າ, “ແມ່ນແລ້ວໝູ່ເຮົາເປັນຜູ້ຜິດແທ້ທີ່ໄດ້ເຮັດແກ່ນ້ອງຂອງ
ພວກເຮົາ ໝູ່ເຮົາໄດ້ເຮັດໃຫ້ລາວມີຄວາມລຳບາກຫລາຍເມື່ອລາວຮ້ອງຂໍຄວາມຊ່ວຍເຫລືອແຕ່ໝູ່

ເຮົາບໍ່ຍອມຟັງສຽງ ຍ້ອນສິ່ງນັ້ນແຫລະ ຄວາມລຳບາກຈຶ່ງຕາມມາສະໜອງພວກໝູ່ເຮົາດຽວນີ້.”
22ຣູເບັນ ເວົ້າວ່າ, “ຂ້ອຍໄດ້ບອກພວກເຈົ້າແລ້ວວ່າຢ່າຕີລາວ ແຕ່ພວກເຈົ້າກໍບໍ່ຍອມຟັງຂ້ອຍ
ເຫັນບໍ ບັດນີ້ ກຳໄດ້ຕາມສະໜອງແລ້ວ.” 23ໂຢເຊັບ ເຂົ້າໃຈໃນເລື່ອງທີ່ພວກເຂົາເວົ້າ ແຕ່ພວກ
ເຂົາບໍ່ຮູ້ຈັກວ່າເພິ່ນເຂົ້າໃຈ ກໍເພາະວ່າໂຢເຊັບ ໃຊ້ນາຍພາສາເມື່ອເວົ້າກັບເຂົາ. 24ໂຢເຊັບ ໄດ້ໜີ
ຈາກພວກເຂົາ ແລະໄປລີ້ຮ້ອງໄຫ້ຢູ່ຜູ້ດຽວ ເມື່ອເພິ່ນອົດກັ້ນອາລົມຂົມຂື່ນໃຈໄດ້ແລ້ວ ຈຶ່ງກັບ-
ເຂົ້າມາຫາອີກ ເພິ່ນຈຶ່ງສັ່ງໃຫ້ເຂົາເອົາຊີເມໂອນ ອອກມາຜູກໄວ້ຕໍ່ໜ້າຕໍ່ຕາພວກເຂົາ.

## ພວກອ້າຍຂອງໂຢເຊັບຄືນສູ່ປະເທດການາອານ

25ໂຢເຊັບ ສັ່ງໃຫ້ຄົນເອົາເຂົ້າໃສ່ຖົງພວກເຂົາຈົນເຕັມ ແລ້ວເອົາເງິນຂອງແຕ່ລະຄົນໃສ່ໄວ້ໃນ
ຖົງເຂົ້ານັ້ນຄືນ ແລ້ວເອົາອາຫານໃຫ້ພວກເຂົາໄປກິນຕາມທາງນຳ ຄົນຂອງເພິ່ນກໍໄດ້ເຮັດຕາມ
ຄຳສັ່ງນັ້ນທຸກປະການ. 26ພວກອ້າຍທັງຫລາຍກໍພາກັນເອົາເຂົ້າທີ່ຊື້ນັ້ນຕ່າງໃສ່ຫລັງລໍ ແລ້ວກໍ
ອອກເດີນທາງໄປ.

27ຄັນຕໍ່ມາໃນບ່ອນທີ່ພັກເຊົາແຮມຄືນ ຄົນໜຶ່ງໃນຈຳນວນນັ້ນໄດ້ໄຂຖົງເພື່ອເອົາເຂົ້າໃຫ້ລໍກິນ
ແຕ່ໄດ້ພົບເງິນຢູ່ໃນປາກຖົງເຂົ້າ 28ລາວຈຶ່ງຮ້ອງໃສ່ພວກອ້າຍວ່າ, “ເງິນຂອງຂ້ອຍຢູ່ນີ້.” ພວກ
ເຂົາຕົກໃຈຈົນຕົວສັ່ນ ຈຶ່ງຫັນໜ້າເຂົ້າຫາກັນ ແລະເວົ້າວ່າ, “ພຣະເຈົ້າຊິງເຮັດຕໍ່ພວກເຮົາຢ່າງນີ້
ຈະເປັນແນວໃດນໍ?”

29ເມື່ອພວກເຂົາກັບມາຮອດພໍ່ທີ່ປະເທດ ການາອານ ແລ້ວ ກໍເລົ່າເລື່ອງຕ່າງໆທີ່ເກີດຂຶ້ນກັບ
ພວກເຂົາສູ່ພໍ່ຟັງວ່າ, 30“ຜູ້ປົກຄອງປະເທດໄດ້ເວົ້າຢ່າງຮຸນແຮງກັບພວກເຮົາ ທັງຫາເລື່ອງໃສ່ວ່າ
ພວກເຮົາເປັນນັກສືບເຂົ້າໄປໃນປະເທດຂອງເຂົາເຈົ້າ. 31ພວກເຮົາຈຶ່ງເວົ້າກັບເພິ່ນວ່າ ພວກເຮົາ
ເປັນຄົນສັດຊື່ ບໍ່ແມ່ນນັກສືບ. 32ພວກເຮົາມີອ້າຍນ້ອງສິບສອງຄົນ ເປັນລູກພໍ່ດຽວກັນ ຜູ້ໜຶ່ງໄດ້
ຕາຍໄປແລ້ວ ແລະນ້ອງຫລ້າກໍຢູ່ກັບພໍ່ໃນປະເທດ ການາອານ.

33ເພິ່ນໄດ້ເວົ້າວ່າ, “ເຮົາຈະເຊື່ອວ່າພວກເຈົ້າເປັນຄົນສັດຊື່ກໍຕໍ່ເມື່ອຄົນໜຶ່ງໃນຈຳນວນພວກ
ເຈົ້າຈະຕ້ອງຢູ່ກັບເຮົາ ນອກນັ້ນໃຫ້ພາກັນເອົາເຂົ້າກັບຄືນເມືອໃຫ້ຄອບຄົວຂອງພວກເຈົ້າທີ່ກຳ-
ລັງອຶດຢູ່. 34ແຕ່ໃຫ້ພວກເຈົ້າພານ້ອງຊາຍຫລ້ານັ້ນມາຫາເຮົາ ໂດຍວິທີນີ້ແຫລະ ເຮົາຈຶ່ງຈະເຊື່ອ
ວ່າພວກເຈົ້າເປັນຄົນສັດຊື່ແລະບໍ່ແມ່ນນັກສືບ ຄັນແລ້ວເຮົາຈະສົ່ງອ້າຍຂອງພວກເຈົ້າຄືນ ແລະ
ພວກເຈົ້າກໍຈະເຮັດນາຄ້າຂາຍຢູ່ໃນປະເທດນີ້ໄດ້.”

35ໃນຂະນະທີ່ພວກເຂົາໄຂຖົງເຂົ້າ ແຕ່ລະຄົນກໍເຫັນຫໍ່ເງິນຂອງຕົນຢູ່ໃນຖົງ ຄັນພວກເຂົາກັບ
ພໍ່ເຫັນຫໍ່ເງິນ ກໍພາກັນຢ້ານກົວ. 36ຢາໂຄບ ຜູ້ເປັນພໍ່ຈຶ່ງເວົ້າວ່າ, “ພວກເຈົ້າຈະບໍ່ໃຫ້ລູກຢູ່ກັບ
ຂ້ອຍຈັກຄົນຫວະ? ໂຢເຊັບກໍຕາຍໄປແລ້ວ ຊີເມໂອນກໍຖືກຈັບ ແລະບັດນີ້ພວກເຈົ້າຈະເອົາ
ເບັນຢາມິນໜີຈາກຂ້ອຍອີກ ຂ້ອຍຜູ້ດຽວທີ່ທຸກທໍລະມານທີ່ສຸດ.”

37ຣູເບັນຈຶ່ງເວົ້າກັບພໍ່ວ່າ, “ຖ້າຂ້ອຍບໍ່ນຳເບັນຢາມິນມາສົ່ງພໍ່ຄືນ ໃຫ້ພໍ່ຂ້າລູກຊາຍຂອງຂ້ອຍ
ສອງຄົນນັ້ນຖິ້ມ ຂ້ອຍຈະເປັນຜູ້ຮັກສາລາວເອງ ຂ້ອຍຈະຕ້ອງເອົາລາວກັບຄືນມາ.” 38ແຕ່ຢາ-
ໂຄບ ເວົ້າວ່າ, “ຂ້ອຍຈະບໍ່ຍອມໃຫ້ລູກຊາຍຂ້ອຍໄປນຳພວກເຈົ້າ ອ້າຍຂອງລາວກໍໄດ້ຕາຍໄປ
ແລ້ວ ຍັງເຫລືອແຕ່ລາວຜູ້ດຽວ ບາງທີລາວອາດຖືກຂ້າຕາຍຕາມທາງກໍໄດ້ ຂ້ອຍກໍເຖົ້າແກ່

ຫລາຍແລ້ວ ຫາກປະເຊີນກັບຄວາມທຸກໂສກທີ່ພວກເຈົ້າເປັນຜູ້ກໍ່ຂຶ້ນນີ້ ອາດເຮັດໃຫ້ຂ້ອຍຊໍ້າໃຈ
ຕາຍກໍໄດ້.”

# ບົດທີ 43

## ພວກອ້າຍຂອງໂຢເຊັບກັບຄືນໄປປະເທດເອຢິບພ້ອມເບັນຢາມິນ

1ຄວາມອຶດຢາກໃນປະເທດ ການາອານ ຮ້າຍແຮງທີ່ສຸດ. 2ເມື່ອຄອບຄົວຂອງ ໂຢເຊັບ ກິນ
ເຂົ້າຊື່ງຊື້ມາຈາກປະເທດ ເອຢິບ ໝົດແລ້ວ ຢາໂຄບ ຈຶ່ງເວົ້າຕໍ່ພວກລູກຊາຍວ່າ, “ຈົ່ງກັບຄືນໄປຊື້
ອາຫານຕື່ມອີກຈັກໜ່ອຍສຳລັບພວກເຮົາແມ.”

3ຢູດາ ຈຶ່ງຕອບວ່າ “ຜູ້ປົກຄອງປະເທດ ເອຢິບ ໄດ້ເວົ້າກັບພວກເຮົາຢ່າງເດັດຂາດແລ້ວວ່າ ຢ່າ
ໄປປະກົດຕົວໃຫ້ເພິ່ນເຫັນໜ້າອີກ ຖ້າພວກເຮົາບໍ່ນຳເອົານ້ອງຫລ້າເຮົາໄປພົບເພິ່ນ. 4ແຕ່ຖ້າພໍ່
ຍອມຕົກລົງໃຫ້ນ້ອງຊາຍຫລ້າໄປກັບພວກເຮົາ ພວກເຮົາກໍຈະໄປຊື້ເຂົ້າໃຫ້ພໍ່. 5ຫາກພໍ່ບໍ່ຍອມ
ຕົກລົງ ພວກເຮົາກໍຈະບໍ່ຍອມໄປ ເພາະເພິ່ນໄດ້ເວົ້າວ່າ ພວກເຈົ້າຢ່າມາໃຫ້ຂ້ອຍເຫັນໜ້າອີກ
ຖ້າພວກເຈົ້າບໍ່ເອົານ້ອງຊາຍເຈົ້າມາພ້ອມ.”

6ອິສຣາເອນ ຈຶ່ງເວົ້າວ່າ, “ເປັນຫຍັງໝູ່ເຈົ້າຈຶ່ງເຮັດຄວາມຫຍຸ້ງຍາກໃຫ້ຂ້ອຍຫລາຍແທ້ ດັ້ນ
ໄປເວົ້າກັບເພິ່ນວ່າໝູ່ເຈົ້າມີນ້ອງອີກຜູ້ໜຶ່ງ.”

7ພວກເຂົາຈຶ່ງຕອບວ່າ, “ຊາຍຄົນນັ້ນໄດ້ຖາມພວກເຮົາແລະຄອບຄົວວ່າ ພໍ່ຂອງພວກເຈົ້າຍັງ
ມີຊີວິດຢູ່ບໍ? ພວກເຈົ້າມີນ້ອງຊາຍບໍ? ພວກເຮົາກໍພາກັນຕອບຄຳຖາມເພິ່ນຕາມຊື່ ເພາະພວກ
ເຮົາບໍ່ຮູ້ຈັກວ່າ ເພິ່ນຈະບອກໃຫ້ມານຳເອົານ້ອງຊາຍໄປຫາເພິ່ນ.”

8ຢູດາ ເວົ້າກັບ ອິສຣາເອນ ພໍ່ຂອງຕົນວ່າ, “ຈົ່ງອະນຸຍາດໃຫ້ນ້ອງຊາຍໄປກັບພວກລູກສາ
ແລ້ວພວກເຮົາກໍຈະໄດ້ຮີບຕຽມຕົວອອກເດີນທາງ ແລ້ວທຸກຄົນທັງພໍ່ ແລະລູກຫລານກໍຈະບໍ່ອຶດ
ເຂົ້າຕາຍ. 9ລູກຈະຍອມຖວາຍຊີວິດເພື່ອລາວ ຂໍພໍ່ມອບພາລະຮັບຜິດຊອບນີ້ໄວ້ກັບລູກ ຖ້າວ່າ
ລູກບໍ່ນຳລາວກັບຄືນມາຢ່າງປອດໄພ ລູກຈະຍອມເປັນຜູ້ຮັບຜິດຕໍ່ພໍ່ຕະຫລອດຊີວິດ. 10ຖ້າພວກ
ເຮົາບໍ່ຊັກຊ້າຢູ່ແບບນີ້ ປານນີ້ພວກເຮົາອາດຈະກັບມາເປັນຖ້ຽວທີສອງແລ້ວ.”

11ອິສຣາເອນຜູ້ເປັນພໍ່ຈຶ່ງເວົ້າກັບພວກເຂົາວ່າ, “ຖ້າດັ່ງນັ້ນໃຫ້ເຮັດດັ່ງນີ້ ຄືໃຫ້ເອົາຜົນລະປູກ
ອັນດີທີ່ສຸດທີ່ມີໃນປະເທດຂອງເຮົາ ໃສ່ຖົງເຂົ້າໄປຕ້ອນຊາຍຄົນນັ້ນ ເຊັ່ນ: ຢານ ນໍ້າເຜີ້ງ
ເຄື່ອງເທດ ໝາກກໍ່ ແລະໝາກບົກ. 12ຈົ່ງຖືເງິນໄປນຳອີກສອງເທົ່າ ເພາະວ່າພວກເຈົ້າຈະຕ້ອງ
ເອົາເງິນທີ່ພົບໃນຖົງເຂົ້າໄປສົ່ງຄືນ ບາງທີອາດເປັນການຫລົງລືມກໍໄດ້. 13ຈົ່ງຕຽມຕົວແລ້ວເອົາ
ນ້ອງຊາຍອອກເດີນທາງໄປຫາຊາຍຄົນນັ້ນສາ. 14ຂໍ ພຣະເຈົ້າ ຜູ້ມີອຳນາດຍິ່ງໃຫຍ່ຈົ່ງດົນບັນ-
ດານໃຫ້ຊາຍຜູ້ນັ້ນມີຄວາມເມດຕາຕໍ່ພວກເຈົ້າ ເພື່ອວ່າເພິ່ນຈະໄດ້ປົດປ່ອຍນ້ອງຂອງພວກເຈົ້າ
ອີກຜູ້ໜຶ່ງ ກັບ ເບັນຢາມິນ ໃຫ້ກັບຄືນມາຫາພໍ່ ຖ້າວ່າຈະສູນເສຍລູກທັງສອງອີກກໍຕ້ອງຈຳເປັນ.”

15ດັ່ງນັ້ນ ພວກລູກຊາຍຂອງ ຢາໂຄບກໍເອົາຂອງຕ້ອນ ແລະເງິນສອງເທົ່າພ້ອມກັບ ເບັນຢາ-
ມິນ ແລ້ວອອກເດີນທາງໄປສູ່ປະເທດ ເອຢິບ ເພື່ອພົບ ໂຢເຊັບ. 16ເມື່ອ ໂຢເຊັບ ເຫັນ ເບັນຢາມິນ
ມາກັບພວກເຂົາ ເພິ່ນຈຶ່ງສັ່ງຄົນໃຊ້ຜູ້ທີ່ຮັບຜິດຊອບໃນເຮືອນວ່າ, “ຈົ່ງພາຄົນເຫລົ່ານີ້ໄປເຮືອນ

ຂ້ອຍ ແລ້ວເຈົ້າຈົ່ງໄປຂ້າສັດ ແລະຈັດແຈງອາຫານ ເພາະວ່າຕອນສວາຍນີ້ ຄົນເຫລົ່ານີ້ຈະກິນ
ເຂົ້ານຳຂ້ອຍ.” 17ຄົນໃຊ້ກໍໄດ້ເຮັດຕາມທີ່ໂຢເຊັບສັ່ງ ແລະພາພວກເຂົາໄປເຮືອນຂອງເພິ່ນ.

18ເມື່ອພວກເຂົາຖືກນຳພາໄປຮອດເຮືອນຂອງໂຢເຊັບ ພວກເຂົາກໍເກີດຄວາມຢ້ານກົວ ແລະ
ຄິດໄປວ່າ, “ພວກເຮົາຖືກພາມານີ້ກໍຍ້ອນເງິນທີ່ພວກເຮົາພົບຢູ່ໃນຖົງເຂົ້າຕອນທີ່ມາຖ້ຽວທຳອິດ
ນັ້ນ ເຂົາເຈົ້າອາດທຸບຕີພວກເຮົາ ເອົາພວກເຮົາໄປເປັນທາດ ແລະຍຶດເອົາລໍທັງໝົດຂອງພວກ
ເຮົາ.” 19ດັ່ງນັ້ນ ພວກເຂົາຈຶ່ງມາຫາຄົນໃຊ້ຜູ້ຮັບຜິດຊອບໃນເຮືອນຂອງໂຢເຊັບ ແລະເວົ້າກັບ
ລາວທີ່ປະຕູເຮືອນວ່າ, 20ອາດຍາເອີຍ ຂໍໄດ້ໂຜດກະລຸນາທ້ອນ ເມື່ອຄາວໝູ່ຂ້ານ້ອຍໄດ້ມາຊື້
ສະບຽງອາຫານຖ້ຽວກ່ອນນັ້ນ. 21ເວລາເດີນທາງກັບ ພວກຂ້ານ້ອຍໄດ້ໄຂຖົງເຂົ້າ ແລ້ວໄດ້ພົບ
ເງິນທີ່ຈ່າຍຄ່າຊື້ເຂົ້າຄືບຕາມຈຳນວນເກົ່າ ຈຶ່ງໄດ້ຖືເອົາເງິນຈຳນວນນັ້ນມາສົ່ງຄືນ. 22ໝູ່ຂ້ານ້ອຍ
ບໍ່ຮູ້ຈັກວ່າ ແມ່ນໃຜເອົາເງິນນັ້ນມາໃສ່ໃນຖົງເຂົ້າໄວ້ ເທື່ອນີ້ໝູ່ຂ້ານ້ອຍໄດ້ຖືເງິນມາຫລາຍພໍສົມ-
ຄວນເພື່ອຂໍຊື້ເຂົ້າອີກ.”

23ຄົນໃຊ້ຈຶ່ງເວົ້າວ່າ, “ຢ່າສູ່ອຸກໃຈ ແລະຢ້ານກົວເລີຍ ພຣະເຈົ້າຂອງພວກເຈົ້າ ແລະຂອງພໍ່
ພວກເຈົ້າໄດ້ເອົາຊັບສົບສົມບັດນີ້ມາໃສ່ໃນຖົງເຂົ້າຂອງພວກເຈົ້າ ເງິນທີ່ພວກເຈົ້າຈ່າຍນັ້ນ ຂ້ອຍ
ໄດ້ຮັບຮຽບຮ້ອຍແລ້ວ” ແລ້ວລາວກໍນຳເອົາຊີເມໂອນອອກມາຫາພວກເຂົາ.

24ຄົນໃຊ້ຈຶ່ງພາພວກເຂົາເຂົ້າໄປໃນເຮືອນໂຢເຊັບ ລາວໄດ້ເອົານໍ້າໃຫ້ພວກເຂົາລ້າງຕີນ
ແລະເອົາເຟືອງໃຫ້ລໍກິນ. 25ພວກເຂົາຕຽມຈັດຂອງຕ້ອນໄວ້ມອບໃຫ້ໂຢເຊັບໃນຕອນສວາຍ
ເພາະພວກເຂົາຮູ້ວ່າ ເພິ່ນຈະມາຮັບປະທານອາຫານທີ່ບ້ານ.

26ເມື່ອໂຢເຊັບມາຮອດບ້ານ ພວກເຂົາກໍພາກັນເອົາຂອງຕ້ອນເຂົ້າໄປໃນເຮືອນ ເພື່ອມອບໃຫ້
ເພິ່ນ ພວກເຂົາໄດ້ຂາບລົງກັບດິນຕໍ່ໜ້າໂຢເຊັບ. 27ໂຢເຊັບໄດ້ຖາມເຖິງຄວາມສຸກທຸກຂອງພວກ
ເຂົາ ແລ້ວຈຶ່ງຖາມຕໍ່ໄປວ່າ, “ພໍ່ຂອງໝູ່ເຈົ້າ ຊຶ່ງໝູ່ເຈົ້າໄດ້ເວົ້າໃຫ້ຂ້ອຍຟັງວ່າເຖົ້າແກ່ຫລາຍແລ້ວ
ນັ້ນ ເປັນຢ່າງໃດ? ເພິ່ນຍັງມີຊີວິດຢູ່ ແລະສະບາຍດີບໍ?” 28ພວກເຂົາຈຶ່ງຕອບວ່າ, “ພໍ່ຂອງໝູ່
ຂ້ານ້ອຍ ຂ້າໃຊ້ທີ່ສັດຊື່ຕໍ່ອາດຍາຍັງມີຊີວິດຢູ່ ແລະຍັງຢູ່ສະບາຍດີ” ຄັນແລ້ວພວກເຂົາກໍຂາບ
ລົງດິນຕໍ່ໜ້າເພິ່ນອີກ.

29ເມື່ອໂຢເຊັບເຫັນເບັນຢາມິນນ້ອງຊາຍຄີງໆຂອງຕົນ ເພິ່ນຈຶ່ງເວົ້າວ່າ, “ຊາຍຄົນນີ້ເປັນ
ນ້ອງຊາຍຫລ້າຂອງໝູ່ເຈົ້າ ຊຶ່ງໄດ້ເວົ້າໃຫ້ຂ້ອຍຟັງແຕ່ກ່ອນນັ້ນຕີ ແມ່ນບໍ? ນ້ອງເອີຍ ຂໍພຣະ-
ເຈົ້າຈົ່ງອວຍພອນແກ່ເຈົ້າ.” 30ຄັນແລ້ວ ໂຢເຊັບກໍຟ້າວຢ່າງອອກໜີໄປ ເພາະຈິດໃຈຂອງເພິ່ນມີ
ຄວາມຮູ້ສຶກຕື່ນເຕັ້ນຫລາຍທີ່ເຫັນນ້ອງຊາຍຄີງໆຂອງຕົນ ເພິ່ນເກືອບຮ້ອງໄຫ້ຕໍ່ໜ້າພວກເຂົາ
ແຕ່ເມື່ອອົດບໍ່ໄດ້ ເພິ່ນຈຶ່ງເຂົ້າໄປລີ້ຮ້ອງໄຫ້ຢູ່ໃນຫ້ອງສ່ວນຕົວ.

31ຫລັງຈາກລ້າງໜ້າລ້າງຕາແລ້ວ ເພິ່ນຈຶ່ງໄດ້ອອກມາທາງນອກ ພະຍາຍາມລະງັບຄວາມຮູ້-
ສຶກໄວ້ ແລ້ວສັ່ງໃຫ້ຄົນໃຊ້ຈັດແຈງເອົາອາຫານມາ. 32ເຂົາໄດ້ຈັດແຈງໂຕະໃຫ້ໂຢເຊັບກິນຜູ້ດຽວ
ຕ່າງຫາກ ແລະໄດ້ຈັດແຈງໃຫ້ພວກອ້າຍນ້ອງໂຕະໜຶ່ງອີກຕ່າງຫາກ ເພາະພວກເຂົາຖືວ່າເປັນ
ການອັບອາຍຂາຍໜ້າທີ່ຈະກິນຮ່ວມໂຕະກັບຊາວເຮັບເຣີ. 33ພວກອ້າຍນ້ອງຂອງໂຢເຊັບນັ່ງ
ລຽນກັນຢູ່ໂຕະຕໍ່ໜ້າໂຢເຊັບ ພວກເຂົານັ່ງເປັນລຳດັບແຕ່ອ້າຍກົກມາຫານ້ອງຫລ້າຕາມອາຍຸ

ເມື່ອພວກເຂົານັ່ງຮຽບຮ້ອຍແລ້ວ ພວກເຂົາກໍເບິ່ງໜ້າກັນແລະກັນຢ່າງປະຫລາດໃຈ. 34ຄົນໃຊ້
ໄດ້ແຈກອາຫານແຕ່ໂຕະຂອງໂຢເຊັບ ແລະໄດ້ແຈກໃຫ້ເບັນຢາມິນຫລາຍກວ່າພວກອື່ນຫ້າເທົ່າ
ດັ່ງນັ້ນພວກເຂົາຈຶ່ງກິນ ແລະດື່ມກັບເພິ່ນຈົນອີ່ມໜຳສຳລານ

# ບົດທີ 44

## ຈອກເຫລົ້າເສຍ

1ໂຢເຊັບໄດ້ສັ່ງຄົນໃຊ້ຜູ້ຮັບຜິດຊອບໃນເຮືອນຂອງຕົນວ່າ, "ຈົ່ງເອົາສະບຽງອາຫານໃສ່ຖົງ
ຂອງຄົນເຫລົ່ານີ້ ໃຫ້ຫລາຍເທົ່າທີ່ພວກເຂົາສາມາດເອົາໄປໄດ້ ແລະໃຫ້ເອົາເງິນຂອງເຂົາແຕ່-
ລະຄົນໃສ່ລົງໃນຖົງເຂົ້າແຕ່ລະຖົງ 2ໃຫ້ເອົາເງິນຊື້ເຂົ້າຂອງພວກເຂົາກັບຈອກເງິນຂອງເຮົາໃສ່
ລົງໃນຖົງເຂົ້ານ້ອງຫລ້າຂອງພວກເຂົາ." ແລ້ວຄົນໃຊ້ກໍເຮັດຕາມທີ່ໂຢເຊັບສັ່ງທຸກປະການ.
3ເມື່ອຮຸ່ງຂຶ້ນ ພວກເຂົາກໍພາກັນອອກເດີນທາງກັບເມືອ ພ້ອມດ້ວຍລໍຂອງພວກເຂົາ. 4ຄັນ
ພວກເຂົາໄປບໍ່ໄກຈາກເມືອງພໍເທົ່າໃດ ໂຢເຊັບຈຶ່ງເວົ້າກັບຄົນໃຊ້ຜູ້ຮັບຜິດຊອບປະຈຳເຮືອນຂອງ
ຕົນວ່າ, "ຈົ່ງຮີບອອກໄປຕິດຕາມຄົນເຫລົ່ານັ້ນ ເມື່ອເຈົ້າທັນພວກເຂົາແລ້ວ ໃຫ້ເຈົ້າວ່າ ເປັນ
ຫຍັງພວກເຈົ້າເຮັດການຊົ່ວຕອບແທນການດີ? 5ເປັນຫຍັງຈຶ່ງລັກເອົາຈອກເງິນນາຍຂ້ອຍ ຊຶ່ງ
ເພິ່ນໃຊ້ສຳລັບດື່ມນໍ້າ ແລະໃຊ້ກວດເບິ່ງເຫດການ ພວກເຈົ້າເຮັດຜິດຢ່າງຮ້າຍແຮງທີ່ສຸດຮູ້ບໍ?"
6ເມື່ອຄົນໃຊ້ນັ້ນອອກຕິດຕາມທັນພວກເຂົາແລ້ວ ກໍເວົ້າດັ່ງທີ່ນາຍສັ່ງນັ້ນກັບພວກເຂົາ.
7ພວກເຂົາຈຶ່ງຕອບວ່າ, "ອາດຍາເວົ້າເຊັ່ນນີ້ໝາຍຄວາມວ່າຢ່າງໃດ? ພວກຂ້ານ້ອຍບໍ່ເຄີຍໄດ້
ເຮັດເຊັ່ນນີ້ຈັກເທື່ອ. 8ອາດຍາກໍໄດ້ເຫັນພວກຂ້ານ້ອຍນຳເອົາເງິນ ຊຶ່ງໄດ້ພົບຢູ່ຖົງເຂົ້າໃນປະ-
ເທດການາອານນັ້ນມາສົ່ງຄືນໃຫ້ພວກອາດຍາ ແລ້ວເປັນຫຍັງພວກຂ້ານ້ອຍຊິມາລັກເອົາເງິນ
ຫລືຄຳຂອງນາຍອາດຍາອີກ? 9ຖ້າສິ່ງເຫລົ່ານັ້ນຕົກຢູ່ນຳຜູ້ໃດຜູ້ໜຶ່ງໃນຈຳນວນພວກຂ້ານ້ອຍ ຂໍ
ໃຫ້ອາດຍາຂ້າຜູ້ນັ້ນເສຍ ແລ້ວພວກຂ້ານ້ອຍທຸກຄົນກໍຈະຍອມເປັນທາດຂອງອາດຍາ."
10ຄົນໃຊ້ຈຶ່ງເວົ້າວ່າ, "ຕົກລົງ ແຕ່ຖ້າວ່າຂ້ອຍພົບຈອກນັ້ນນຳຜູ້ໃດຜູ້ໜຶ່ງໃນພວກເຈົ້າ ຜູ້ມີ
ຈອກນັ້ນຈະຕ້ອງເປັນທາດຂອງຂ້ອຍ ນອກນັ້ນໃຫ້ເປັນອິດສະຫລະໝົດ." 11ດັ່ງນັ້ນ ພວກເຂົາ
ຈຶ່ງຟ້າວເອົາຖົງສະບຽງອາຫານລົງຈາກຫລັງລໍ ແລ້ວແຕ່ລະຄົນກໍໄຂຖົງຂອງຕົນອອກ. 12ຄົນໃຊ້
ຂອງໂຢເຊັບຈຶ່ງຄົ້ນເບິ່ງແຕ່ອ້າຍກົກຈົນຮອດນ້ອງຊາຍຫລ້າ ແລ້ວພົບຈອກນັ້ນຢູ່ໃນຖົງເຂົ້າຂອງ
ເບັນຢາມິນ. 13ເມື່ອເປັນດັ່ງນັ້ນ ພວກເຂົາຈຶ່ງພາກັນຈີກເສື້ອຂອງຕົນເອງດ້ວຍຄວາມເສຍໃຈ
ພາກັນເອົາຖົງຂຶ້ນໃສ່ຫລັງລໍ ແລະກັບຄືນເຂົ້າໄປໃນເມືອງ.
14ເມື່ອຢູດາ ແລະພວກອ້າຍນ້ອງມາຮອດເຮືອນຂອງໂຢເຊັບ ຊຶ່ງຂະນະນັ້ນເພິ່ນເອງກໍຍັງຢູ່
ເຮືອນ ພວກເຂົາຈຶ່ງພາກັນຂາບລົງຕໍ່ໜ້າເພິ່ນ 15ແລ້ວໂຢເຊັບກໍເວົ້າວ່າ, "ເປັນຫຍັງພວກເຈົ້າຈຶ່ງ
ເຮັດດັ່ງນີ້? ພວກເຈົ້າອາດບໍ່ຮູ້ຈັກວ່າຄົນຄືຂ້ອຍນີ້ເປັນຄົນຕາທິບ."
16ຢູດາເວົ້າວ່າ, "ບໍ່ມີທາງໂຕ້ຖຽງໄດ້ແລ້ວຂ້ານ້ອຍ ແລະບໍ່ຊ່າງຈະພິສູດຄວາມບໍລິສຸດຂອງໝູ່
ຂ້ານ້ອຍຢ່າງໃດໄດ້ອີກ ພຣະເຈົ້າໄດ້ປະຈານພວກຂ້ານ້ອຍ ເພາະຄວາມຜິດຂອງໝູ່ຂ້ານ້ອຍ
ແລ້ວທ່ານຜູ້ໃຫຍ່ເອີຍ ບັດນີ້ ພວກຂ້ານ້ອຍທຸກຄົນໄດ້ຕົກເປັນທາດຂອງທ່ານແລ້ວ ແລະຈະບໍ່

ແມ່ນແຕ່ສະເພາະຄົນທີ່ທ່ານພົບຈອກເທົ່ານັ້ນ.”
17ໂຢເຊັບເວົ້າວ່າ, “ບໍ່ແມ່ນດອກ ຂ້ອຍຈະບໍ່ເຮັດເຊັ່ນນັ້ນ ຜູ້ທີ່ຂ້ອຍພົບຈອກນຳເທົ່ານັ້ນທີ່ຈະ
ເປັນທາດຂອງຂ້ອຍ ສ່ວນນອກນັ້ນຈົ່ງກັບໄປຫາພໍ່ຂອງພວກເຈົ້າຢ່າງປອດໄພສາ.”

## ຢູດາຮ້ອງຂໍເພື່ອເປັນຢາມິນ

18ຄັນຕໍ່ມາ ຢູດາໄດ້ເຂົ້າໄປຫາໂຢເຊັບ ແລະຮ້ອງຂໍວ່າ, “ທ່ານຜູ້ຍິ່ງໃຫຍ່ເອີຍ ໂຜດກະລຸນາ
ໃຫ້ຂ້ານ້ອຍໄດ້ລົມກັບທ່ານຢ່າງເປັນກັນເອງກ່ອນທ້ອນ ຂໍທ່ານຢ່າຟ້າວໂກດຮ້າຍຂ້ານ້ອຍ ທ່ານ
ເອງກໍເປັນຄືກັບຟາຣາໂອ 19-20ທ່ານຖາມພວກຂ້ານ້ອຍວ່າ ພວກເຈົ້າມີພໍ່ ແລະນ້ອງບໍ? ພວກ
ຂ້ານ້ອຍກໍຕອບວ່າ ພວກຂ້ານ້ອຍມີພໍ່ທີ່ເຖົ້າແລ້ວ ມີນ້ອງຊາຍຜູ້ໜຶ່ງເກີດຕອນທີ່ພໍ່ເຖົ້າແກ່ແລ້ວ
ອ້າຍຂອງເດັກນ້ອຍຜູ້ນັ້ນໄດ້ຕາຍໄປແລ້ວ ແລະລາວຜູ້ດຽວເທົ່ານັ້ນທີ່ເກີດຮ່ວມທ້ອງແມ່ດຽວກັນ
ຊຶ່ງຍັງມີຊີວິດຢູ່ ສະນັ້ນພໍ່ຈຶ່ງຮັກລາວຫລາຍ.
21ທ່ານໄດ້ເວົ້າກັບພວກຂ້ານ້ອຍວ່າ ໃຫ້ເອົາລາວມາທີ່ນີ້ ເພື່ອທ່ານຈະໄດ້ເຫັນລາວ. 22ໝູ່ຂ້າ-
ນ້ອຍກໍໄດ້ຕອບທ່ານວ່າ ເດັກນ້ອຍຜູ້ນັ້ນຈາກພໍ່ມາບໍ່ໄດ້ ຖ້າລາວຈາກພໍ່ໄປເມື່ອໃດ ພໍ່ລາວຕ້ອງ
ຕາຍ. 23ຄັນແລ້ວທ່ານເວົ້າວ່າ ພວກເຈົ້າຢ່າມາໃຫ້ຂ້ອຍເຫັນໜ້າອີກ ຖ້າບໍ່ເອົານ້ອງຊາຍຫລ້າ
ພວກເຈົ້າມານຳ. 24ເມື່ອຂ້ານ້ອຍກັບຄືນເມືອຫາພໍ່ຜູ້ເປັນຂ້າໃຊ້ຂອງທ່ານ ໝູ່ຂ້ານ້ອຍຈຶ່ງໄດ້ເລົ່າ
ເລື່ອງທີ່ທ່ານເວົ້າໃຫ້ເພິ່ນຟັງ.
25ຕໍ່ມາ ເພິ່ນຈຶ່ງເວົ້າວ່າພາກັນໄປຊື້ເຂົ້າມາໃຫ້ພໍ່ຈັກໜ່ອຍແດ່. 26ໝູ່ຂ້ານ້ອຍຈຶ່ງຕອບເພິ່ນວ່າ
ໝູ່ຂ້ານ້ອຍກັບມາຫາທ່ານບໍ່ໄດ້ ຖ້າບໍ່ໄດ້ເອົານ້ອງຊາຍຫລ້າມານຳ.
27ເພິ່ນໄດ້ຕອບໝູ່ຂ້ານ້ອຍວ່າ ພວກເຈົ້າກໍຮູ້ແລ້ວວ່າ ເມຍຂອງຂ້ອຍໄດ້ເກີດລູກຊາຍສອງຄົນ
ນີ້ໃຫ້ສຳລັບຂ້ອຍ. 28ຜູ້ທຳອິດກໍຕາຍຈາກຂ້ອຍໄປແລ້ວ ຂ້ອຍຄິດວ່າລາວອາດຈະຖືກສັດຮ້າຍ
ກັດຕາຍ ເພາະວ່າຂ້ອຍບໍ່ໄດ້ເຫັນລາວຈົນເທົ່າດຽວນີ້. 29ບັດນີ້ ຖ້າພວກເຈົ້າຈະເອົາລູກຊາຍ
ຫລ້າຜູ້ນີ້ໄປຈາກຂ້ອຍ ແລະຖືກຂ້າອີກ ພວກເຈົ້າກໍຈະສ້າງຄວາມທຸກທໍລະມານໃຈ ພວກເຈົ້າກໍ
ຈະຂ້າຂ້ອຍອີກຍາມເຖົ້າແກ່ແລ້ວແບບນີ້.
30-31ທ່ານຜູ້ຍິ່ງໃຫຍ່ເລື່ອງມີຢູ່ວ່າ ຫາກຂ້ານ້ອຍກັບເມືອຫາພໍ່ໂດຍບໍ່ມີນ້ອງຄົນນີ້ແລ້ວ ເມື່ອພໍ່
ຮູ້ວ່າບໍ່ມີລາວມານຳ ເພິ່ນກໍຈະສິ້ນໃຈຕາຍ ຊີວິດຂອງເພິ່ນຂຶ້ນຢູ່ກັບເດັກຄົນນີ້ ທ່ານເອີຍ ໝູ່ຂ້າ-
ນ້ອຍກໍຈະສ້າງຄວາມທຸກໃຈຢ່າງຫລວງຫລາຍ ເທົ່າກັບຂ້າເພິ່ນໃນເວລາທີ່ເພິ່ນເຖົ້າແກ່ແບບນີ້.
32ຂ້ານ້ອຍຍັງເວົ້າກັບເພິ່ນອີກວ່າ ຈະເອົາຊີວິດຂອງຂ້ານ້ອຍແທນເດັກຄົນນີ້ ໂດຍບອກເພິ່ນວ່າ
ຖ້າບໍ່ໄດ້ນຳເອົາລາວກັບຄືນມາຫາເພິ່ນ ຂ້ານ້ອຍກໍຈະເປັນຜູ້ເຮັດຜິດຕໍ່ເພິ່ນຕະຫລອດຊົ່ວຊີວິດ.
33ບັດນີ້ ທ່ານເອີຍ ຂ້ານ້ອຍຈະຢູ່ທີ່ນີ້ເປັນທາດຮັບໃຊ້ຂອງທ່ານແທນເດັກຄົນນີ້ ກະລຸນາໃຫ້
ລາວກັບຄືນເມືອກັບພວກອ້າຍຂອງລາວສາ. 34ຂ້ານ້ອຍຈະກັບຄືນເມືອຫາພໍ່ໄດ້ຢ່າງໃດ ຖ້າ
ຫາກບໍ່ມີເດັກຄົນນີ້ເມືອນຳ ຂ້ານ້ອຍບໍ່ຢາກເຫັນເຄາະຮ້າຍເກີດຂຶ້ນກັບພໍ່ຂອງຂ້ານ້ອຍອີກ.”

# ບົດທີ 45

## ໂຢເຊັບບອກໃຫ້ພວກອ້າຍນ້ອງຮູ້ວ່າເພິ່ນແມ່ນໃຜ

1ໂຢເຊັບ ບໍ່ສາມາດຈະລະງັບຄວາມຮູ້ສຶກຂອງຕົນຕໍ່ໜ້າຜູ້ຮັບໃຊ້ທັງໝົດໄດ້ ສະນັ້ນ ເພິ່ນຈຶ່ງ
ຮ້ອງອອກມາວ່າ, “ໃຫ້ທຸກຄົນອອກໄປ” ເວລາເພິ່ນບອກພວກອ້າຍແລະນ້ອງຂອງຕົນວ່າເພິ່ນຄື
ໃຜນັ້ນ ບໍ່ມີຄົນອື່ນເລີຍຢູ່ທີ່ນັ້ນ. 2ເພິ່ນໄຫ້ສະອຶກສະອື້ນສຽງດັງຈົນຊາວ ເອຢິບ ໄດ້ຍິນ ແລະ
ຂ່າວນີ້ກໍແຜ່ໄປເຖິງພະລາຊະວັງ.

3ໂຢເຊັບ ເວົ້າຕໍ່ພວກອ້າຍວ່າ, “ຂ້ອຍແມ່ນ ໂຢເຊັບ ພໍ່ຂອງຂ້ອຍຍັງມີຊີວິດຢູ່ບໍ?” ພວກອ້າຍ
ພາກັນຢ້ານກົວຈົນບໍ່ສາມາດຕອບເພິ່ນໄດ້. 4ແລ້ວ ໂຢເຊັບ ຈຶ່ງເວົ້າຕໍ່ໄປວ່າ, “ຈົ່ງພາກັນຫຍັບເຂົ້າ
ມາໃກ້ໆຂ້ອຍ” ພວກເຂົາກໍຫຍັບເຂົ້າໄປໃກ້ໆ ແລ້ວເພິ່ນເວົ້າວ່າ, “ຂ້ອຍແມ່ນ ໂຢເຊັບ ນ້ອງຊາຍ
ຂອງພວກເຈົ້າ ຊຶ່ງພວກເຈົ້າໄດ້ຂາຍມາປະເທດ ເອຢິບ. 5ບັດນີ້ ຢ່າໄດ້ກະວົນກະວາຍໃຈ ຫລືຕິ
ຕົນເອງທີ່ຂາຍຂ້ອຍມາທີ່ນີ້ ແມ່ນ ພຣະເຈົ້າ ແທ້ທີ່ຊົງໃຊ້ຂ້ອຍມາທີ່ນີ້ກ່ອນ ເພື່ອຊ່ອຍເຫລືອຊີວິດ
ພວກເຈົ້າ. 6ດຽວນີ້ ເປັນພຽງປີທີສອງຂອງການອຶດຢາກຢູ່ໃນແຜ່ນດິນນີ້ ແຕ່ຍັງຈະມີອີກຫ້າປີທີ່
ຈະບໍ່ມີການປູກຝັງແລະການເກັບກ່ຽວ. 7ພຣະເຈົ້າ ໄດ້ຊົງໃຊ້ຂ້ອຍມາກ່ອນພວກເຈົ້າ ເພື່ອຊ່ອຍ
ເຫລືອຊີວິດຂອງພວກເຈົ້າໄວ້ ແລະເພື່ອໃຫ້ເຊື້ອສາຍຂອງພວກເຮົາມີຢູ່ສືບຕໍ່ໄປ. 8ດັ່ງນັ້ນ ຈຶ່ງບໍ່
ແມ່ນພວກເຈົ້າແທ້ສົ່ງຂ້ອຍມາ ແຕ່ແມ່ນ ພຣະເຈົ້າ ພຣະອົງຊົງ ໂຜດໃຫ້ຂ້ອຍເປັນຂຸນນາງຜູ້ສຳ-
ຄັນທີ່ສຸດຂອງ ຟາຣາໂອ ຄືຮັບຜິດຊອບຊັບສົມບັດ ແລະນໍລະດົກທັງໝົດຂອງພະອົງ ແລະປົກ-
ຄອງປະເທດ ເອຢິບ. 9ບັດນີ້ ພວກເຈົ້າຈົ່ງພາກັນຟ້າວ ເມືອຫາພໍ່ແລະນຳຄຳສັ່ງຂອງຂ້ອຍ ເມືອ
ບອກເພິ່ນວ່າ ພຣະເຈົ້າ ໄດ້ປະທານໃຫ້ຂ້ອຍເປັນຜູ້ປົກຄອງປະເທດ ເອຢິບ ໃຫ້ພໍ່ມາຫາຂ້ອຍໄວ
ທີ່ສຸດ. 10ໃຫ້ພໍ່ເອງມາພ້ອມລູກຫລານ ຝູງແກະ ແລະຝູງແບ້ ທັງງົວຄວາຍ ແລະທຸກສິ່ງທີ່ພໍ່ມີ
ຂ້ອຍຈະ ໃຫ້ພໍ່ຢູ່ ເຂດ ໂກເຊັນ ບ່ອນທີ່ໃກ້ກັບຂ້ອຍ. 11ຖ້າພໍ່ຢູ່ ໂກເຊັນ ຂ້ອຍກໍສາມາດເບິ່ງແຍງ
ເພິ່ນໄດ້ ຄວາມອຶດຢາກຍັງຈະມີອີກຫ້າປີ ແລະຂ້ອຍບໍ່ຢາກໃຫ້ພໍ່ພ້ອມກັບຄົນທັງປວງທີ່ພໍ່ມີຕ້ອງ
ອຶດຢາກ.” 12ໂຢເຊັບ ເວົ້າກັບພວກອ້າຍນ້ອງຕໍ່ໄປວ່າ, “ບັດນີ້ພວກເຈົ້າທຸກຄົນພ້ອມທັງ ເບັນຢາ-
ມິນ ນ້ອງຊາຍຂອງຂ້ອຍໄດ້ເຫັນແລ້ວວ່າ ແມ່ນຂ້ອຍເອງທີ່ກຳລັງເວົ້າກັບພວກເຈົ້າ. 13ຈົ່ງເລົ່າສູ່
ພໍ່ຟັງວ່າ ຂ້ອຍມີອຳນາດຢູ່ໃນປະເທດນີ້ພຽງໃດ ແລະຈົ່ງເລົ່າທຸກສິ່ງທີ່ພວກເຈົ້າໄດ້ເຫັນ ແລ້ວ
ໃຫ້ຮີບພາເພິ່ນມາໄວໆ.”

14ຄັນແລ້ວ ໂຢເຊັບ ຈຶ່ງກອດ ເບັນຢາມິນ ນ້ອງຊາຍຂອງຕົນໄວ້ໃນອ້ອມແຂນພ້ອມທັງຮ້ອງໄຫ້
ເບັນຢາມິນ ກໍຮ້ອງໄຫ້ໃນອ້ອມກອດຂອງອ້າຍຄືກັນ. 15ຕໍ່ມາເພິ່ນກໍກອດຈູບພວກອ້າຍທຸກໆຄົນ
ພ້ອມທັງຮ້ອງໄຫ້.

16ເມື່ອຂ່າວໄດ້ແຜ່ໄປເຖິງພະລາຊະວັງຂອງ ຟາຣາໂອ ພວກອ້າຍນ້ອງຂອງ ໂຢເຊັບ ໄດ້ມາຫາ
ເພິ່ນ ພະອົງພ້ອມດ້ວຍຂ້າລາຊະການກໍມີຄວາມຍິນດີນຳ. 17ຟາຣາໂອ ຊົງກ່າວຕໍ່ ໂຢເຊັບ ວ່າ,
“ຈົ່ງບອກໃຫ້ພວກອ້າຍ ເຈົ້າບັນທຸກສິ່ງຂອງ ໃສ່ຫລັງສັດກັບຄືນ ເມືອປະເທດ ການາອານ. 18ໃຫ້
ພວກເຂົາເມືອເອົາພໍ່ ແລະຄອບຄົວຂອງພວກເຂົາມາຫາເຮົາ ເຮົາຈະມອບທີ່ດິນບ່ອນອຸດົມສົມ-
ບູນໃນປະເທດ ເອຢິບ ໃຫ້ ແລະພວກເຂົາຈະໄດ້ກິນຜົນລະປູກອັນດີໃນປະເທດນີ້. 19ບອກໃຫ້

ພວກເຂົາເອົາກວຽນຈາກປະເທດ ເອຢິບ ໄປເພື່ອໃຫ້ພໍ່ ພ້ອມເມຍ ແລະລູກຂອງພວກເຂົາຂີ່ມາທີ່
ນີ້. [20]ຢ່າໃຫ້ພວກເຂົາອຸກອັ່ງໃຈທີ່ຕ້ອງໜີຈາກຖິ່ນກັນດານແລະຊັບສິ່ງຂອງໆພວກເຂົາ ເພາະ
ສິ່ງທີ່ດີໃນປະເທດ ເອຢິບ ເຮົາຈະມອບເປັນຂອງພວກເຂົາ."

[21]ພວກລູກຊາຍຂອງ ຢາໂຄບ ກໍປະຕິບັດຕາມ ໂຢເຊັບ ເອົາກວຽນຫລາຍຄັນໃຫ້ຕາມພະຄໍາສັ່ງ
ຂອງ ຟາຣາໂອ ແລະໄດ້ເອົາອາຫານໃຫ້ພວກເຂົາໄປກິນຕາມທາງດ້ວຍ. [22]ເພິ່ນຍັງໄດ້ເອົາ
ເຄື່ອງໃໝ່ໃຫ້ພວກເຂົາຖ່າຍຜູ້ລະຊຸດ ສ່ວນ ເບັນຢາມິນ ເພິ່ນໄດ້ເອົາເງິນສາມຮ້ອຍຫລຽນ ແລະ
ເຄື່ອງນຸ່ງຫ້າຊຸດໃຫ້ເປັນພິເສດ. [23]ເພິ່ນຍັງໄດ້ສົ່ງລໍສິບໂຕຕ່າງຜົນລະປູກທີ່ດີໃນປະເທດ ເອຢິບ
ໄປໃຫ້ພໍ່ຂອງເພິ່ນ ແລະລໍອີກສິບໂຕຕ່າງເຂົ້າສານ ເຂົ້າຈີ່ ແລະສະບຽງອາຫານອື່ນໆສໍາລັບພໍ່
ເພິ່ນ ເພື່ອເດີນທາງກັບມາປະເທດ ເອຢິບ. [24]ເພິ່ນໄດ້ໄປສົ່ງພວກອ້າຍອອກເດີນທາງກັບ ແລະ
ສັ່ງພວກເຂົາວ່າ, "ເວລາເດີນທາງຢ່າຜິດຖຽງກັນເດີ້."

[25]ພວກເຂົາອອກຈາກປະເທດ ເອຢິບ ກັບໄປຫາຢາໂຄບພໍ່ຂອງຕົນທີ່ ການາອານ. [26]ຄັນເມື່ອ
ຮອດແລ້ວພວກເຂົາຈຶ່ງເວົ້າໃຫ້ພໍ່ຟັງວ່າ, "ໂຢເຊັບຍັງມີຊີວິດຢູ່ ເພິ່ນເປັນຜູ້ປົກຄອງປະເທດ ເອ-
ຢິບທັງໝົດ" ພໍໄດ້ຍິນເຊັ່ນນັ້ນ ຢາໂຄບກໍຕົກໃຈ ແລະຍັງບໍ່ຍອມເຊື່ອຄວາມເວົ້າຂອງພວກເຂົາ.
[27]ແຕ່ເມື່ອພວກເຂົາໄດ້ເລົ່າຄວາມເວົ້າຂອງ ໂຢເຊັບທຸກໆຄໍາສູ່ພໍ່ຟັງ ເມື່ອໄດ້ເຫັນກວຽນທີ່ ໂຢເຊັບ
ສົ່ງມາໃຫ້ເປັນພາຫານະຂີ່ໄປປະເທດ ເອຢິບ ເພິ່ນກໍຮູ້ສຶກຕື່ນເຕັ້ນດີໃຈຫລາຍ. [28]ຄັນແລ້ວ ເພິ່ນກໍ
ໄດ້ເວົ້າວ່າ, "ພໍແລ້ວ ບາດນີ້ ໂຢເຊັບລູກຊາຍຂອງຂ້ອຍຍັງມີຊີວິດຢູ່ ຂ້ອຍຕ້ອງໄປພົບລາວ
ກ່ອນຂ້ອຍຈະຕາຍ."

# ບົດທີ 46

## ຢາໂຄບກັບຄອບຄົວໄປປະເທດເອຢິບ

[1]ຢາໂຄບໄດ້ມ້ຽນມັດເອົາສິ່ງຂອງທຸກສິ່ງທຸກຢ່າງເທົ່າທີ່ມີ ແລ້ວກໍໄປເມືອງ ເບເອ-ເຊບາ ຊຶ່ງຢູ່
ທີ່ນັ້ນເພິ່ນໄດ້ຖວາຍບູຊາແດ່ພຣະເຈົ້າຂອງ ອີຊາກພໍ່ຂອງຕົນ. [2]ໃນຄືນນັ້ນ ພຣະເຈົ້າຊົງກ່າວກັບ
ຢາໂຄບ ໃນນິມິດວ່າ, "ຢາໂຄບ ຢາໂຄບເອີຍ" ເພິ່ນຈຶ່ງຂານຕອບວ່າ, "ໂດຍ ຂ້ານ້ອຍກໍາລັງ
ຟັງພຣະອົງຢູ່." [3]ພຣະອົງຊົງກ່າວຕໍ່ໄປວ່າ, "ເຮົາເປັນ ພຣະເຈົ້າ ພຣະເຈົ້າຂອງພໍ່ເຈົ້າ ບໍ່ຕ້ອງ
ຢ້ານກົວສິ່ງໃດເລີຍໃນການທີ່ຈະໄປປະເທດ ເອຢິບ ເຮົາຈະເຮັດໃຫ້ເຊື້ອສາຍຂອງເຈົ້າທະວີຂຶ້ນ
ເປັນຊົນຊາດໃຫຍ່ຢູ່ໃນທີ່ນັ້ນ. [4]ເຮົາຈະນໍາໜ້າເຈົ້າໄປ ແລະເຮົາຈະພາເອົາເຊື້ອສາຍຂອງເຈົ້າ
ກັບຄືນມາທີ່ນີ້ ໂຢເຊັບຈະໄດ້ຢູ່ກັບເຈົ້າເມື່ອເວລາເຈົ້າຕາຍ."

[5]ແລ້ວຢາໂຄບ ຈຶ່ງອອກຈາກເມືອງ ເບເອ-ເຊບາໄປ ພວກລູກຊາຍໄດ້ເອົາພໍ່ ລູກນ້ອຍ ແລະ
ເມຍຂອງພວກເຂົາຂຶ້ນກວຽນ ຊຶ່ງ ຟາຣາໂອ ໄດ້ສົ່ງມາຮັບເອົາພວກເຂົາ. [6]ພວກເຂົາພາກັນເອົາ
ຝູງສັດ ແລະຊັບສົມບັດເທົ່າທີ່ມີຢູ່ໃນປະເທດ ການາອານ ແລ້ວອອກເດີນທາງມຸ້ງໜ້າໄປສູ່ປະ-
ເທດ ເອຢິບ ຢາໂຄບໄດ້ເອົາຄົນຂອງເພິ່ນທັງໝົດໄປນໍາ. [7]ຄື ລູກຊາຍ ຫລານຊາຍ ລູກສາວ
ແລະຫລານສາວ.

[8-15]ຕໍ່ໄປນີ້ ແມ່ນເຊື້ອສາຍຂອງຢາໂຄບ ທີ່ໄປຢູ່ປະເທດ ເອຢິບ ຢາໂຄບໄດ້ມີເມຍສີ່ຄົນ ຄື

ນາງ ເລອາ ແລະນາງ ຣາເຄນ ນາງ ຊິລະປາ ເປັນສາວໃຊ້ຂອງນາງ ເລອາ ແລະນາງ ບິນຮາ
ເປັນສາວໃຊ້ຂອງນາງ ຣາເຄນ ແລ້ວທັງສອງຄົນນີ້ໄດ້ເປັນເມຍນ້ອຍຂອງ ຢາໂຄບ. ນາງ ເລອາ
ມີລູກທີ່ເກີດຢູ່ໃນປະເທດ ເມໂຊໂປຕາເມຍ ມີດັ່ງນີ້: ຣູເບັນ ຊີເມໂອນ ເລວີ ຢູດາ ອິດຊາຄາ
ເຊບູລູນ ແລະນາງ ດີນາ. ມີພວກຫລານຂອງນາງ ເລອາອີກ ຄືລູກຂອງ ຣູເບັນ ສີ່ຄົນຊື່ ຮາໂນກ
ປານລູ ເຮດຊະໂຣນ ແລະ ກາມີ ລູກຂອງ ຊີເມໂອນ ທີ່ເກີດຈາກເມຍຫລວງຫ້າຄົນຊື່ ເຢມູເອນ
ຢາມິນ ໂອຮາດ ຢາກິນ ໂຊຮາ ແລະລູກທີ່ເກີດຈາກເມຍນ້ອຍຊາວ ການາອານ ຊື່ ຊາອູນ.
ລູກຂອງ ເລວີ ມີສາມຄົນຊື່ ເກໂຊນ ໂກຮາດ ແລະ ເມຣາຣີ ລູກຂອງ ຢູດາ ມີຫ້າຄົນຊື່ ເອຣະ
ໂອນານ ເຊລາ ເຊຣາ ແລະ ເປເຣັດ ພ້ອມກັບລູກຊື່ ເຮດຊະໂຣນ ແລະ ຮາມູນ ແຕ່ ເອຣະ ກັບ
ໂອນານ ໄດ້ຕາຍໄປແລ້ວຢູ່ໃນປະເທດ ການາອານ. ລູກຂອງ ອິດຊາຄາ ມີສີ່ຄົນຊື່ ໂຕລາ ປູວາ
ອີໂອບ ແລະຊິມໂຣນ ລູກຂອງ ເຊບູລູນ ສາມຄົນຊື່ ເຊເຣັດ ເອໂລນ ແລະຢາເລເອນ ຄົນທີ່ກ່າວ
ຊື່ມານີ້ ມີທັງໝົດສາມສິບສາມຄົນ. 16-18ນາງ ຊິລະປາ ເມຍນ້ອຍ ຢາໂຄບ ມີລູກສາວສອງຄົນຄື
ຄາດ ເອເຊ ແລະມີຫລານສິບເອັດຄົນຄື: ລູກຂອງ ຄາດ ເຈັດຄົນຊື່ ຊີຟີໂອນ ຮັກກີ ຊູນີ ເອັດ-
ຊະໂບນ ເອຣີ ອາໂຣດີ ແລະ ອາເຣລີ ລູກຂອງ ອາເຊ ຫ້າຄົນຊື່ ອິມນາ ອິຊະວາ ອີຊະວີ ນາງ
ເຊຣາ ແລະ ເບຣີອາ ພ້ອມກັບລູກຊື່ ເຮເບ ແລະ ມັນກີເອນ ຄົນເຫລົ່ານີ້ມີທັງໝົດສິບຫົກຄົນ.
19-22ນາງ ຣາເຄນ ມີລູກຊາຍສອງຄົນຊື່ ໂຢເຊັບ ແລະ ເບັນຢາມິນ ພວກຫລານຂອງນາງ ຣາເຄນ
ອີກຄື ລູກຂອງ ໂຢເຊັບ ທີ່ເກີດຈາກນາງ ອາເສນັດ ໃນປະເທດ ເອຢິບ ສອງຄົນຊື່ ມານາເຊ ແລະ
ເອຟຣາຢິມ ນາງ ອາເສນັດ ເປັນລູກສາວຂອງ ໂປຕີເຟຣາ ປະໂລຫິດ ເມືອງ ໂອນ. ລູກຂອງ
ເບັນຢາມິນ ສິບຄົນຊື່ ເບລາ ເບເຄ ອາຊະເບັນ ເກຣາ ນາອາມານ ເອຣີ ໂຣເຊ ມູບປິມ
ຮຸບປິມ ແລະ ອາດ ຄົນເຫລົ່ານີ້ເປັນເຊື້ອສາຍຂອງ ຣາເຄນ ມີທັງໝົດສິບສີ່ຄົນ. 23-25ນາງ ບິນ-
ຮາ ເມຍນ້ອຍຂອງ ຢາໂຄບ ມີລູກສອງຄົນຊື່ ດານ ແລະ ນັບທາລີ ແລະມີຫລານຫ້າຄົນຄືລູກຂອງ
ດານ ໜຶ່ງຄົນຊື່ ຮູຊີມ ແລະລູກຂອງ ນັບທາລີ ສີ່ຄົນຊື່ ຢາເຊເອນ ກູນີ ເຢດເຊ ແລະຊິນເລັມ
ຄົນເຫລົ່ານີ້ເປັນເຊື້ອສາຍຂອງ ບິນຮາ ມີທັງໝົດເຈັດຄົນ.

26-27ຈຳນວນ ເຊື້ອສາຍ ແທ້ໆທັງໝົດຂອງ ຢາໂຄບ ຊຶ່ງໄປຢູ່ໃນປະເທດ ເອຢິບ ມີຫົກສິບຫົກ
ຄົນ ໂດຍບໍ່ນັບເມຍຂອງພວກລູກຊາຍ ໂຢເຊັບ ມີລູກຊາຍທີ່ເກີດຢູ່ໃນປະເທດ ເອຢິບ ສອງຄົນ
ໂຮມຄອບຄົວຂອງ ຢາໂຄບ ທັງໝົດໄປຢູ່ທີ່ນັ້ນມີເຈັດສິບຄົນ.

## ຢາໂຄບແລະຄອບຄົວໃນປະເທດເອຢິບ

28ຕໍ່ມາ ຢາໂຄບ ໄດ້ສົ່ງ ຢູດາ ໄປບອກ ໂຢເຊັບ ລ່ວງໜ້າ ໃຫ້ເພິ່ນມາລໍຖ້າຮັບພໍ່ທີ່ ເຂດ ໂກເຊັນ.
29ໂຢເຊັບກໍຕຽມລົດມ້າ ແລະອອກໄປພົບພໍ່ຂອງຕົນທີ່ນັ້ນ ເມື່ອເພິ່ນໄດ້ເຫັນພໍ່ ເພິ່ນກໍຟ້າວແລ່ນ
ໄປກອດຄໍໃນທັນທີ ແລະໄຫ້ສະອຶກສະອື້ນເປັນເວລາດົນນານ.

30ຢາໂຄບ ເວົ້າຕໍ່ ໂຢເຊັບ ວ່າ, “ບັດນີ້ພໍ່ຄືຊິຕາຍຕາຫລັບຢູ່ດອກ ໃນ ເມື່ອພໍ່ໄດ້ເຫັນໜ້າລູກ
ແລະຮູ້ວ່າລູກຍັງມີຊີວິດຢູ່.” 31ແລ້ວ ໂຢເຊັບ ກໍເວົ້າກັບພວກອ້າຍນ້ອງ ແລະຄອບຄົວຂອງພໍ່ວ່າ,
“ຂ້ອຍຈະຕ້ອງໄປທູນ ຟາຣາໂອ ໃຫ້ຊົງຊາບວ່າ ພວກອ້າຍນ້ອງ ແລະຄອບຄົວພໍ່ຂອງເຮົາ ຊຶ່ງ
ອາໄສຢູ່ໃນປະເທດ ການາອານ ໄດ້ມາຮອດແລ້ວ. 32ທຸກຄົນ ເປັນຄົນລ້ຽງແກະ ແລະງົວຄວາຍ

ໄດ້ເອົາຝູງແກະຝູງງົວພ້ອມທຸກໆສິ່ງທີ່ມີມານຳ. 33ເມື່ອ ຟາຣາໂອ ເອີ້ນເຈົ້າໄປ ແລະຖາມວ່າ
ພວກເຈົ້າມີອາຊີບຫຍັງ? 34ໃຫ້ພວກເຈົ້າຕອບວ່າ ຂ້າແດ່ພະອົງ ພວກຂ້ານ້ອຍລ້ຽງສັດເປັນອາ-
ຊີບຄືດັ່ງບັນພະບູລຸດ ພວກເຈົ້າຕ້ອງທູນໂດຍວິທີນີ້ ພວກເຈົ້າຈຶ່ງຈະໄດ້ອາໄສຢູ່ໃນເຂດ ໂກເຊັນ”
ໂຢເຊັບ ເວົ້າເຊັ່ນນີ້ກໍເພາະວ່າຊາວ ເອຢິບ ບໍ່ມັກພວກລ້ຽງແກະ.

# ບົດທີ 47

1ດັ່ງນັ້ນ ໂຢເຊັບ ຈຶ່ງໄປກາບທູນ ຟາຣາໂອ ວ່າ, “ພໍ່ແລະພວກອ້າຍຂອງຂ້ານ້ອຍໄດ້ມາແຕ່ປະ-
ເທດ ການາອານ ຮອດແລ້ວ ພ້ອມທັງຝູງສັດ ແລະທຸກສິ່ງທີ່ພວກເຂົາມີ ດຽວນີ້ພວກເຂົາເຈົ້າໄດ້
ອາໄສຢູ່ໃນເຂດ ໂກເຊັນ.” 2ຄັນແລ້ວ ໂຢເຊັບກໍແນະນຳອ້າຍທັງຫ້າຄົນທີ່ມານຳແດ່ ຟາຣາໂອ.
3ພະອົງຖາມພວກເຂົາວ່າ, “ພວກເຈົ້າມີອາຊີບຫຍັງ?” ພວກເຂົາທູນຕອບວ່າ, “ຂ້າແດ່ພະອົງ
ພວກຂ້ານ້ອຍລ້ຽງສັດ ເປັນອາຊີບ ເໝືອນດັ່ງບັນພະບູລຸດ. 4ພວກຂ້ານ້ອຍມາຂໍ ເພິ່ງພະບໍລົມມະ
ໂພທິສົມພານ ຂອງ ພະ ອົງ ກໍ ເພາະວ່າ ໃນ ປະ ເທດ ການາອານ ເກີດ ມີຄວາມອຶດຢາກຢ່າງຮ້າຍ
ແຮງ ຈົນວ່າບໍ່ມີທົ່ງຫຍ້າສຳລັບລ້ຽງຝູງສັດ ຂ້າແດ່ພະອົງຂໍພະອົງຊົງກະລຸນາໃຫ້ພວກຂ້ານ້ອຍ
ໄດ້ອາໄສຢູ່ໃນ ໂກເຊັນນີ້ເທີ້ນ.”
5-6ຟາຣາໂອ ກ່າວແກ່ ໂຢເຊັບ ວ່າ, “ໃຫ້ພວກເຂົາອາໄສຢູ່ໃນເຂດ ໂກເຊັນ ໄດ້ ແລະຖ້າເຈົ້າຮູ້
ວ່າຜູ້ໜຶ່ງຜູ້ໃດໃນພວກເຂົາມີຄວາມສາມາດກໍໃຫ້ພວກເຂົາຮັບລ້ຽງຝູງສັດຂອງເຮົານຳ.”
ເມື່ອ ຢາໂຄບ ແລະລູກຊາຍມາຮອດປະເທດ ເອຢິບ ບ່ອນທີ່ ໂຢເຊັບ ປົກຄອງຢູ່ ຟາຣາໂອ
ແຫ່ງປະເທດ ເອຢິບ ກໍຊົງຊາບເລື່ອງນີ້ ພະອົງກ່າວຕໍ່ ໂຢເຊັບ ວ່າ, “ບັດນີ້ ພໍ່ ແລະພວກອ້າຍ
ນ້ອງຂອງ ເຈົ້າກໍໄດ້ມາຫາເຈົ້າແລ້ວ ແຜ່ນດິນທັງໝົດໃນປະເທດນີ້ກໍຢູ່ໃນການປົກຄອງຂອງເຈົ້າ
ຈົ່ງຫາບ່ອນທີ່ດີເໝາະສົມໃນປະເທດນີ້ໃຫ້ເຂົາເຈົ້າສາ.”
7ຄັນຕໍ່ມາ ໂຢເຊັບ ໄດ້ພາຢາໂຄບ ພໍ່ຂອງຕົນເຂົ້າເຝົ້າ ຟາຣາໂອ ຢາໂຄບ ໄດ້ຖວາຍພຣະພອນ
ແດ່ພະອົງ 8-9ຟາຣາໂອ ຈຶ່ງຊົງຖາມເພິ່ນວ່າ, “ເຈົ້າມີອາຍຸໄດ້ຈັກປີແລ້ວ?” ຢາໂຄບ ທູນຕອບວ່າ,
“ຂ້ານ້ອຍມີອາຍຸພຽງຮ້ອຍສາມສິບປີ ຊຶ່ງເປັນຊີວິດທີ່ທ່ອງທ່ຽວໄປມາ ວັນເວລາທີ່ຂ້ານ້ອຍໃຊ້ຊີ-
ວິດຢູ່ກໍນ້ອຍ ແລະລຳບາກ ບໍ່ຄືຊີວິດຂອງປູ່ຍ່າຕາຍາຍຂອງຂ້ານ້ອຍ.”
10-11ຢາໂຄບ ໄດ້ທູນລາ ຟາຣາໂອ ແລ້ວກໍກັບໄປ ຫລັງຈາກນັ້ນ ໂຢເຊັບກໍຈັດທີ່ດິນໃຫ້ພໍ່ ແລະ
ອ້າຍຂອງຕົນຢູ່ໃນປະເທດ ເອຢິບ ໂດຍເລືອກເອົາດິນຕອນດີໆໃນເຂດ ຣາເມເສດ ໃຫ້ເປັນສົມ
ບັດຂອງພວກເຂົາຕາມທີ່ ຟາຣາໂອ ໄດ້ຊົງສັ່ງ. 12ໂຢເຊັບ ໄດ້ຈັດຫາສະບຽງອາຫານໃຫ້ພໍ່ໃຫ້ພວກ
ອ້າຍແລະຄອບຄົວຂອງພວກເຂົາທຸກໆຄົນຕະຫລອດທັງຜູ້ຕິດຕາມດ້ວຍ.

## ການປົກຄອງຂອງໂຢເຊັບໃນເວລາອຶດຢາກ

13ການອຶດຢາກຄັ້ງນີ້ຮ້າຍແຮງທີ່ສຸດ ຈົນວ່າໃນປະເທດທັງຫລາຍບໍ່ມີເຂົ້າຈະກິນ ປະເທດ ເອ-
ຢິບ ແລະປະເທດ ການາອານ ກໍອ່ອນເພຍດ້ວຍການອຶດຢາກ. 14ໂຢເຊັບ ທ້ອນໂຮມເອົາເງິນທັງ
ໝົດທີ່ໄດ້ຈາກການຂາຍເຂົ້າໃຫ້ແກ່ຊາວ ເອຢິບ ແລະຊາວ ການາອານ ນຳໄປຖອກທີ່ຄັງຂອງ ຟາ-
ຣາໂອ. 15ເມື່ອເງິນຂອງຊາວ ເອຢິບ ແລະຊາວ ການາອານ ໝົດ ຊາວ ເອຢິບ ທຸກຄົນກໍແຫ່ກັນມາ

ຫາ ໂຢເຊັບ ແລະເວົ້າວ່າ, "ພວກຂ້ານ້ອຍຂໍອາຫານກິນແດ່ທ້ອນ ຢ່າປ່ອຍໃຫ້ພວກຂ້ານ້ອຍຕາຍ ເລີຍ ກະລຸນາຊິດຊ່ອຍພວກຂ້ານ້ອຍດ້ວຍວິທີໃດວິທີໜຶ່ງແດ່ທ້ອນ ເພາະເງິນຂອງພວກຂ້ານ້ອຍ ກໍໝົດສົ້ງແລ້ວ."

16ໂຢເຊັບຈຶ່ງຕອບວ່າ, "ຖ້າພວກເຈົ້າບໍ່ມີເງິນ ໃຫ້ພວກເຈົ້າເອົາສັດມາຂ້ອຍຈະເອົາເຂົ້າແລກ-
ປ່ຽນເອົາ." 17ພວກເຂົາຕ່າງກໍເອົາສັດຂອງຕົນມາໃຫ້ໂຢເຊັບ ແລະເພິ່ນກໍເອົາອາຫານແລກປ່ຽນ
ເອົາສັດເຫລົ່ານັ້ນ ເປັນຕົ້ນວ່າມ້າ ແກະ ແບ້ ງົວ ແລະລໍ ໃນປີນັ້ນເພິ່ນໄດ້ຈ່າຍອາຫານໃຫ້ແກ່
ປະຊາຊົນໂດຍວິທີແລກປ່ຽນກັບສັດຕ່າງໆ ຂອງພວກເຂົາເຈົ້າ.

18ປີຕໍ່ມາ ພວກເຂົາກໍພາກັນມາຫາໂຢເຊັບອີກ ແລະເວົ້າວ່າ, "ທ່ານຜູ້ຍິ່ງໃຫຍ່ເອີຍ ພວກ
ຂ້ານ້ອຍຂໍເວົ້າຄວາມຈິງໃຫ້ທ່ານຟັງ ໂດຍບໍ່ໄດ້ປິດບັງຫຍັງ ຄືເງິນຂອງພວກຂ້ານ້ອຍກໍໝົດ
ແລ້ວ ແລະສັດຂອງພວກຂ້ານ້ອຍກໍເປັນຂອງທ່ານໝົດແລ້ວ ດຽວນີ້ ພວກຂ້ານ້ອຍບໍ່ເຫລືອຫຍັງ
ໃຫ້ອາດຍານອກຈາກຮ່າງກາຍ ແລະດິນດອນຂອງພວກຂ້ານ້ອຍເທົ່ານັ້ນ. 19ຢ່າປ່ອຍໃຫ້ພວກ
ຂ້ານ້ອຍອຶດຕາຍທ້ອນ ຈົ່ງຊອກຫາວິທີຢ່າງໃດຢ່າງໜຶ່ງຊ່ອຍພວກຂ້ານ້ອຍແດ່ ຂໍຢ່າປ່ອຍໃຫ້
ພວກຂ້ານ້ອຍເສຍດິນດອນຕອນຫຍ້າໄປລ້າໆ ກະລຸນາຊື້ແລະເອົາເຂົ້າແລກກັບດິນຂອງພວກ
ຂ້ານ້ອຍສາ ພວກຂ້ານ້ອຍຍິນດີຍອມເປັນທາດຂອງຟາຣາໂອ ແລ້ວພະອົງກໍຈະໄດ້ດິນແດນ
ຂອງພວກຂ້ານ້ອຍ ຂໍທ່ານຈົ່ງເອົາເຂົ້າປູກໃຫ້ພວກຂ້ານ້ອຍດ້ວຍ ເພື່ອພວກຂ້ານ້ອຍຈະບໍ່ອຶດ
ຕາຍ ແລະເພື່ອດິນດອນຂອງພວກຂ້ານ້ອຍຈະບໍ່ຫວ່າງເປົ່າ."

20ໂຢເຊັບກໍຊື້ເອົາດິນທັງໝົດໃຫ້ຟາຣາໂອ ຊາວເອຢິບທຸກຄົນຂາຍດິນຂອງຕົນກໍຍ້ອນວ່າ-
ການອຶດຢາກເທື່ອນີ້ຮ້າຍແຮງທີ່ສຸດ ດັ່ງນັ້ນດິນທັງໝົດໃນປະເທດເອຢິບຈຶ່ງກາຍເປັນດິນຂອງ
ຟາຣາໂອ. 21ໂຢເຊັບໄດ້ເອົາປະຊາຊົນທັງໝົດໃນປະເທດມາເປັນທາດ. 22ຍັງແຕ່ດິນຂອງພວກ
ປະໂລຫິດເທົ່ານັ້ນທີ່ບໍ່ໄດ້ຊື້ເອົາ ພວກປະໂລຫິດບໍ່ໄດ້ຂາຍດິນຂອງພວກເຂົາກໍເພາະວ່າພວກເຂົາ
ໄດ້ຮັບເງິນອຸດໜູນຈາກຟາຣາໂອ.

23ໂຢເຊັບເວົ້າຕໍ່ປະຊາຊົນວ່າ, "ພວກເຈົ້າເຫັນບໍ ມື້ນີ້ຂ້ອຍໄດ້ຊື້ພວກເຈົ້າພ້ອມທັງດິນໃຫ້ຟາ-
ຣາໂອ ນີ້ຄືເຂົ້າປູກສຳລັບພວກເຈົ້າ ຊຶ່ງພວກເຈົ້າຕ້ອງເອົາໄປຫວ່ານໃນດິນຂອງພວກເຈົ້າ.
24ເມື່ອຮອດເວລາເກັບກ່ຽວ ພວກເຈົ້າຕ້ອງຖວາຍຜົນລະປູກໜຶ່ງສ່ວນຫ້າໃຫ້ຟາຣາໂອ ສ່ວນທີ່
ເຫລືອນັ້ນໃຫ້ເປັນຂອງພວກເຈົ້າ ເພື່ອເປັນເຂົ້າປູກ ແລະໄວ້ກິນສຳລັບພວກເຈົ້າ ແລະຄອບ-
ຄົວ." 25ພວກເຂົາພາກັນຕອບວ່າ, "ອາດຍາໄດ້ເຮັດດີຕໍ່ພວກຂ້ານ້ອຍ ໂດຍໄດ້ຊ່ອຍເຫລືອຊີວິດ
ຂອງພວກຂ້ານ້ອຍໄວ້ ພວກຂ້ານ້ອຍຍິນດີເປັນທາດຂອງຟາຣາໂອ."

26ດັ່ງນັ້ນ ໂຢເຊັບຈຶ່ງແຕ່ງກົດໝາຍປົກຄອງທີ່ດິນໃນປະເທດເອຢິບໄວ້ ຄືຕ້ອງຖວາຍຜົນລະ-
ປູກໜຶ່ງສ່ວນຫ້າໃຫ້ແກ່ຟາຣາໂອ ກົດໝາຍນີ້ຍັງໃຊ້ກັນຢູ່ຈົນເຖິງທຸກວັນນີ້ ດິນຂອງປະໂລຫິດ
ເທົ່ານັ້ນທີ່ບໍ່ເປັນຂອງຟາຣາໂອ.

## ຄວາມປະສົງອັນສຸດທ້າຍຂອງຢາໂຄບ

27ພວກອິສຣາເອນທີ່ອາໄສຢູ່ໃນປະເທດເອຢິບ ໄດ້ຮັ່ງມີເປັນດີຂຶ້ນພ້ອມທັງມີລູກຫລານ
ຫລາຍຂຶ້ນ.

28ຢາໂຄບ ອາໄສຢູ່ໃນປະເທດ ເອຢິບ ສິບເຈັດປີຈົນເພິ່ນອາຍຸໄດ້ ຮ້ອຍສີ່ສິບເຈັດປີ. 29ເມື່ອ
ຢາໂຄບ ຮູ້ສຶກວ່າຕົນເອງໃກ້ຈະຕາຍແລ້ວ ເພິ່ນກໍຮ້ອງ ໂຢເຊັບ ລູກຊາຍມາເວົ້າວ່າ, "ຈົ່ງສາບານ
ຕໍ່ໜ້າພໍ່ໂດຍໃຫ້ເອົາມືຂອງເຈົ້ານົບໄວ້ໃນຫວ່າງຂາພໍ່ ແລ້ວສັນຍາວ່າລູກຈະສັດຊື່ ແລະປະພຶດດີ
ຕໍ່ພໍ່ ແລະຢ່າຝັງສົບພໍ່ໄວ້ໃນປະເທດ ເອຢິບ ນີ້. 30ພໍ່ຕ້ອງການໃຫ້ລູກຝັງພໍ່ໄວ້ໃນບ່ອນທີ່ຝັງປູ່ຍ່າ
ຕາຍາຍຂອງພໍ່ ຈົ່ງເອົາພໍ່ອອກໜີຈາກປະເທດ ເອຢິບ ແລະຝັງພໍ່ໄວ້ໃນອຸບໂມງຂອງພວກປູ່ຍ່າ
ຕາຍາຍນັ້ນ" ໂຢເຊັບ ຕອບວ່າ, "ລູກຈະເຮັດຕາມທີ່ພໍ່ບອກ."
31ຢາໂຄບ ຜູ້ມີຊື່ວ່າ ອິສຣາເອນ ເວົ້າວ່າ, "ຈົ່ງສາບານຕໍ່ພໍ່ວ່າລູກຈະເຮັດດັ່ງນັ້ນ" ໂຢເຊັບ ກໍ
ສາບານຕາມ ອິສຣາເອນ ຕ້ອງການທຸກຢ່າງ ແລ້ວໄດ້ຂາບລົງທີ່ຫົວຕຽງນອນຂອງພໍ່ຕົນ.

# ບົດທີ 48

## ຢາໂຄບອວຍພອນເອຟຣາຢິມແລະມານາເຊ

1ຫລັງຈາກນັ້ນມີຄົນມາບອກ ໂຢເຊັບ ວ່າ, "ພໍ່ຂອງອາດຍາເຈັບໜັກ ພໍໄດ້ຍິນດັ່ງນັ້ນ ໂຢເຊັບ ກໍ
ພາລູກຊາຍທັງສອງ ຄື ມານາເຊ ແລະ ເອຟຣາຢິມ ໄປເບິ່ງພໍ່ຂອງຕົນ. 2ເມື່ອ ຢາໂຄບ ໄດ້ຍິນເຂົາ
ມາບອກວ່າ, "ໂຢເຊັບ ລູກຊາຍຂອງເຈົ້າມາເບິ່ງ" ເພິ່ນຈຶ່ງຮວບຮວມເຫື່ອແຮງທີ່ມີຢູ່ລຸກຂຶ້ນນັ່ງ
ເທິງຕຽງ. 3ຢາໂຄບ ເວົ້າຕໍ່ ໂຢເຊັບ ວ່າ, "ພຣະເຈົ້າ ຜູ້ມີອຳນາດຍິ່ງໃຫຍ່ໄດ້ປະກົດຕໍ່ພໍ່ທີ່ເມືອງ ລູເຊ
ໃນປະເທດ ການາອານ ແລະຊົງອວຍພອນໃຫ້ພໍ່. 4ພຣະອົງຊົງກ່າວວ່າ ເຮົາຈະໃຫ້ເຈົ້າມີລູກ
ຫລານຫລາຍ ເພື່ອວ່າເຊື້ອສາຍວົງວານຂອງເຈົ້າຈະກາຍເປັນຫລາຍໆຊົນຊາດ ເຮົາຈະເອົາດິນ
ຕອນນີ້ໃຫ້ເປັນສົມບັດແກ່ເຊື້ອສາຍຂອງເຈົ້າຕະຫລອດໄປ."
5ບັດນີ້ ລູກຊາຍສອງຄົນຂອງເຈົ້າຄື ເອຟຣາຢິມ ແລະ ມານາເຊ ຊຶ່ງໄດ້ເກີດໃນປະເທດ ເອ-
ຢິບ ກ່ອນພໍ່ມາຢູ່ນີ້ຈະຕ້ອງເປັນລູກຂອງພໍ່ຄືກັນກັບ ຣູເບັນ ແລະ ຊີເມໂອນ. 6ແຕ່ວ່າລູກຂອງເຈົ້າທີ່
ເກີດຫລັງພວກເຂົາທັງສອງຄົນນີ້ກໍຈະເປັນຂອງເຈົ້າ ພວກເຂົາຈະໄດ້ຮັບມໍລະດົກສືບຕໍ່ຈາກອ້າຍ
ຂອງພວກເຂົາ. 7ພໍ່ເຮັດດັ່ງນີ້ກໍເພາະວ່າເມື່ອພໍ່ກັບຈາກປະເທດ ເມໂຊໂປຕາເມຍ ຂະນະທີ່ພວກ
ເຮົາຍັງຢູ່ບໍ່ຫ່າງໄກເທົ່າໃດຈາກ ເອຟຣາທາ ໃນປະເທດ ການາອານ ຣາເຄນ ແມ່ຂອງເຈົ້າກໍໄດ້
ເສຍຊີວິດໄປ ເລື່ອງນີ້ສ້າງຄວາມທຸກໃຈອັນໃຫຍ່ຫລວງໃຫ້ແກ່ພໍ່ ພໍ່ໄດ້ຝັງສົບ ແມ່ຂອງເຈົ້າຢູ່
ແຄມທາງໄປເມືອງ ເອຟຣາທາ (ເອຟຣາທາ ແມ່ນເມືອງ ເບັດເລເຮັມ).
8ເມື່ອ ອິສຣາເອນ ເຫັນລູກຊາຍຂອງ ໂຢເຊັບ ແລ້ວຈຶ່ງຖາມວ່າ, "ເດັກສອງຄົນນີ້ແມ່ນໃຜ.?"
9ໂຢເຊັບ ຕອບວ່າ, "ເດັກສອງຄົນນີ້ແມ່ນລູກຂອງຂ້ານ້ອຍ ຊຶ່ງ ພຣະເຈົ້າ ໄດ້ປະທານໃຫ້ໃນປະ-
ເທດ ເອຢິບ ນີ້" ອິສຣາເອນ ເວົ້າວ່າ, "ຈົ່ງເອົາພວກເຂົາເຂົ້າມາຫາພໍ່ເບິ່ງ ເພື່ອພໍ່ຈະໄດ້ອວຍພອນ
ໃຫ້ແກ່ພວກເຂົາ." 10ສາຍຕາຂອງ ອິສຣາເອນ ກໍອ່ອນລົງຍ້ອນຄວາມເຖົ້າແກ່ ເພິ່ນບໍ່ເຫັນຮຸ່ງ
ໂຢເຊັບ ຈຶ່ງນຳເດັກນ້ອຍສອງຄົນນັ້ນເຂົ້າມາ ແລ້ວເພິ່ນກອດ ແລະຈູບພວກເຂົາ. 11ອິສຣາເອນ
ເວົ້າຕໍ່ ໂຢເຊັບ ວ່າ, "ພໍ່ບໍ່ເຄີຍຄິດເລີຍວ່າຈະໄດ້ເຫັນລູກອີກ ແຕ່ດຽວນີ້ ພຣະເຈົ້າ ຊົງນຳພໍ່ໃຫ້ເຫັນ
ຮອດລູກຂອງເຈົ້າ."
12ແລ້ວ ໂຢເຊັບ ກໍເອົາພວກເຂົາທັງສອງອອກຈາກຕັກຂອງ ອິສຣາເອນ ແລ້ວພາກັນກົ້ມຂາບ

ລົງດິນຕໍ່ໜ້າເພິ່ນ. [13]ໂຢເຊັບກໍໄດ້ຈູງເອົາພວກເຂົາທັງສອງມາ ຄືເອົາມືຂວາຈູງເອຟຣາຢິມ
ເພື່ອວ່າລາວຈະໄດ້ຢູ່ທາງກ້ຳຊ້າຍຂອງອິສຣາເອນ ແລະມືຊ້າຍຈູງມານາເຊ ເພື່ອວ່າລາວຈະ
ໄດ້ຢູ່ທາງກ້ຳຂວາຂອງອິສຣາເອນ ແລ້ວນຳພວກເຂົາມາຫາເພິ່ນ. [14]ແຕ່ອິສຣາເອນ ໄດ້ໄຂວ່
ແຂນຂອງຕົນ ເອົາມືຂວາວາງເທິງຫົວເອຟຣາຢິມຜູ້ເປັນນ້ອງ ແລະມືຊ້າຍວາງເທິງຫົວຂອງ
ມານາເຊຜູ້ເປັນອ້າຍ.

[15]ແລ້ວເພິ່ນຈຶ່ງອວຍພອນແກ່ພວກເຂົາທັງສອງວ່າ,

"ຂໍພຣະຜູ້ເປັນເຈົ້າອົງຊົງເປັນພຣະເຈົ້າຂອງປູ່ຍ່າຕາຍາຍຂ້ານ້ອຍ
ຄືອັບຣາຮາມ ແລະອີຊາກ
ຈົ່ງອວຍພອນໃຫ້ແກ່ເຂົາທັງສອງຄົນນີ້.
ຂໍພຣະເຈົ້າຊົງນຳພາຂ້ານ້ອຍທຸກໆວັນ ອວຍພອນແກ່ພວກເຂົາ.
[16] ເທວະດາທີ່ໄດ້ຊ່ອຍຂ້ານ້ອຍ ໃຫ້ລອດພົ້ນຈາກຄວາມຊົ່ວທັງຫລາຍ
ຈົ່ງອວຍພອນໃຫ້ແກ່ພວກເຂົາ ໃຫ້ຊື່ຂອງຂ້ານ້ອຍ ແລະຊື່ຂອງປູ່ຍ່າ
ຕາຍາຍ ຄືອັບຣາຮາມ ແລະອີຊາກຢູ່ນຳພວກເຂົາ ໃຫ້ພວກເຂົາ
ມີລູກຫລານຫລາຍຈົນກາຍເປັນແຜ່ນດິນໃຫຍ່."

[17]ເມື່ອໂຢເຊັບເຫັນພໍ່ຂອງຕົນເອົາມືຂວາ ວາງເທິງຫົວ ເອຟຣາຢິມກໍເກີດບໍ່ພໍໃຈ ດັ່ງນັ້ນເພິ່ນ
ຈຶ່ງປ່ຽນມືຂອງພໍ່ທີ່ວາງເທິງຫົວຂອງເອຟຣາຢິມນັ້ນມາວາງເທິງຫົວຂອງມານາເຊ. [18]ເພິ່ນເວົ້າຕໍ່
ພໍ່ວ່າ, "ບໍ່ແມ່ນທາງນີ້ພໍ່ເອີຍ ທາງນີ້ແມ່ນຜູ້ອ້າຍ ຂໍເອົາມືຂວາວາງເທິງຫົວລາວ."

[19]ຢາໂຄບປະຕິເສດ ແລະເວົ້າວ່າ, "ພໍ່ຮູ້ດີລູກເອີຍ ເຊື້ອສາຍຂອງມານາເຊຈະກາຍເປັນຊົນ
ຊາດຍິ່ງໃຫຍ່ຄືກັນ ແຕ່ວ່າຜູ້ນ້ອງຂອງລາວຈະເປັນຊາດຍິ່ງໃຫຍ່ກວ່າເຊື້ອສາຍຂອງອ້າຍ ລາວ
ຈະກາຍເປັນຊົນຊາດທີ່ຍິ່ງໃຫຍ່." [20]ດັ່ງນັ້ນ ເພິ່ນຈຶ່ງອວຍພອນພວກເຂົາໃນມື້ນັ້ນວ່າ:

"ພວກອິສຣາເອນຈະຂໍພຣະເຈົ້າອວຍພອນໃຫ້ຜູ້ອື່ນ
ເໝືອນດັ່ງພຣະອົງຊົງອວຍພອນເຈົ້າ
ພວກເຂົາຈະເວົ້າວ່າ ຂໍພຣະເຈົ້າຊົງກະທຳຕໍ່ເຈົ້າຄື
ກັບເອຟຣາຢິມ ແລະມານາເຊ"

ໂດຍວິທີນີ້ເພິ່ນຈຶ່ງເອົາເອຟຣາຢິມອອກໜ້າມານາເຊ.

[21]ຄັນແລ້ວ ອິສຣາເອນເວົ້າຕໍ່ໂຢເຊັບວ່າ, "ລູກເຫັນບໍ ພໍ່ໃກ້ຈະຕາຍຢູ່ແລ້ວ ແຕ່ວ່າພຣະເຈົ້າ
ຈະສະຖິດຢູ່ກັບເຈົ້າ ແລະຈະນຳເຈົ້າກັບຄືນເມືອປະເທດຂອງປູ່ຍ່າຕາຍາຍເຈົ້າ. [22]ພໍ່ຈະມອບ
ເຊເຄັມ ບ່ອນພໍ່ເລືອກໄວ້ ແລະໄດ້ມາຈາກຊາວອະໂມຣິດດ້ວຍຄົມດາບ ແລະດ້ວຍທະນູ ເພື່ອ
ໃຫ້ເຈົ້າ ບໍ່ແມ່ນໃຫ້ພວກອ້າຍຂອງເຈົ້າ."

# ບົດທີ 49

## ການທຳນວາຍຂອງຢາໂຄບກ່ຽວກັບລູກຊາຍ

[1]ຢາໂຄບເອີ້ນພວກລູກຊາຍຂອງຕົນມາ ແລະເວົ້າວ່າ, "ໃຫ້ພາກັນມາໂຮມຢູ່ທີ່ນີ້ທຸກຄົນ ແລ້ວ

ພໍ່ຈະທຳນວາຍສິ່ງທີ່ຈະເກີດຂຶ້ນກັບພວກເຈົ້າໃນອານາຄົດ.”
2 “ລູກເອີຍ ຈົ່ງພ້ອມພຽງກັນມາຟັງພໍ່ຂອງພວກເຈົ້າ.
3 ຣູເບັນ ລູກຄົນທຳອິດຂອງພໍ່ເອີຍ ເຈົ້າເປັນກຳລັງ
ແລະເປັນຜົນງານທຳອິດຂອງເຫື່ອແຮງ
ຂອງພໍ່ ເປັນຜູ້ອົງອາດ ແລະແຂງແຮງໃນບັນດາລູກພໍ່.
4 ເຈົ້າຮ້າຍແຮງຄືນໍ້າໄຫລ
ແຕ່ເຈົ້າຈະບໍ່ເປັນຜູ້ສຳຄັນກວ່ານ້ອງ
ເພາະເຈົ້າໄດ້ເປັນຊູ້ກັບເມຍຂອງພໍ່
ເຈົ້າໄດ້ເຮັດໃຫ້ຕຽງນອນຂອງພໍ່ມີມົນທິນ.
5 ຊີເມໂອນ ກັບ ເລວີ ເປັນອ້າຍນ້ອງກັນ
ພວກເຂົາໃຊ້ອາວຸດໄປໃນທາງທີ່ຜິດ.
6 ຂ້ອຍບໍ່ຮ່ວມປຶກສາເລື່ອງລັບນຳພວກເຂົາ
ຂ້ອຍບໍ່ເຂົ້າສ່ວນໃນການປະຊຸມກັບພວກເຂົາ
ເພາະວ່າພວກເຂົາຂ້າຄົນດ້ວຍຄວາມໂກດຮ້າຍ
ແລະພວກເຂົາຕັດເອັນຂະນ່ອງງົວຜູ້ຫລິ້ນ.
7 ຂໍໃຫ້ຄວາມຮ້າຍທີ່ແສນທໍລະມານ ແລະຄວາມໂກດຮ້າຍ
ທີ່ແສນຮ້າຍຂາດຂອງພວກເຂົາຖືກສາບແຊ່ງ
ຂ້ອຍຈະໃຫ້ພວກເຂົາແຕກແຍກກັນໃນດິນແດນ ຢາໂຄບ
ຂ້ອຍຈະໃຫ້ພວກເຂົາພັດພາກຈາກກັນໃນໝູ່ອິສຣາເອນ.
8 ຢູດາ ເອີຍ ພວກອ້າຍນ້ອງຈະສັນລະເສີນເຈົ້າ
ເຈົ້າຈັບຄໍຂອງສັດຕູຍໍຂຶ້ນ
ພວກອ້າຍນ້ອງຈະກົ້ມຂາບລົງຕໍ່ໜ້າເຈົ້າ.
9 ຢູດາ ເປັນລູກສິງ ລາວກັດກິນເຫຍື່ອແລ້ວກັບຄືນສູ່ບ່ອນຊຸ້ມ
ລາວບິດໂຕແລ້ວກໍກົ້ມນອນລົງເໝືອນສິງໂຕໜຶ່ງ
ແລະບໍ່ມີໃຜກ້າຕໍ່ລອງກັບລາວ.
10 ລາວຖືໄມ້ຄ້ອນຂອງກະສັດ ແລະວາງໄວ້ໃນຫວ່າງຕີນຂອງລາວ
ລາວຈະຄຸ້ມຄອງອຳນາດຂອງຕົນ
ຈົນກວ່າຜູ້ສົມຄວນມີອຳນາດຈະມາ
ແລະປົກຄອງປະຊາຊົນທຸກທົ່ວໜ້າ.
11 ລາວມັດລໍໜຸ່ມຂອງລາວໄວ້ທີ່ຕົ້ນອະງຸ່ນທີ່ມີໝາກດົກ
ລາວຊັກເຄື່ອງນຸ່ງດ້ວຍເຫລົ້າອະງຸ່ນສີແດງ.
12 ຕາລາວແດງເພາະດື່ມເຫລົ້າອະງຸ່ນ
ແຂ້ວລາວຂາວເພາະດື່ມນໍ້ານົມ.

13 ເຊບູລູນມາອາໄສຢູ່ແຄມທະເລ
ຝັ່ງທະເລຂອງລາວຈະເປັນບ່ອນຈອດເຮືອ
ເຂດແດນຂອງລາວຈະໄກຈົນຈຸເມືອງຊີໂດນ.
14 ສ່ວນອິດຊາຄາ ແມ່ນລໍຜູ້ທີ່ມີກຳລັງ
ແຕ່ລາວໝອບລົງເມື່ອເວລາໃສ່ອານ.
15 ເມື່ອລາວເຫັນບ່ອນພັກທີ່ດີ
ແລະແຜ່ນດິນທີ່ສະໜຸກສຸກສະບາຍ
ລາວກໍຫງ່ຽງບ່າຂອງຕົນລົງຮັບແບກ
ຍອມເປັນທາດເຮັດວຽກໜັກ.
16 ດານ ຈະເປັນຜູ້ປົກຄອງປະຊາຊົນຂອງຕົນ
ພວກເຂົາຈະເປັນອີກເຜົ່າໜຶ່ງຂອງ ອິສຣາເອນ.
17 ດານ ຈະເປັນງູຢູ່ແຄມຖະໜົນ
ເປັນງູພິດຢູ່ແຄມທາງ
ຊຶ່ງກັດສົ້ນຄະນ່ອງມ້າໃຫ້ຄົນຂີ່ຫງາຍຕົກລົງ.
18 ໂອພຣະຜູ້ເປັນເຈົ້າ ເອີຍ
ຂ້ານ້ອຍຂໍຄວາມຊ່ອຍໃຫ້ພົ້ນມາຈາກພຣະອົງ.
19 ຄາດ ຈະມີພວກປຸ້ນໄລ່ຕາມປຸ້ນລາວ
ແຕ່ລາວຈະຕໍ່ສູ້ຂັບໄລ່ພວກເຂົາໜີ.
20 ດິນແດນຂອງ ອາເຊ ຈະຜະລິດເຂົ້າໄດ້ຢ່າງສົມບູນ
ລາວຈະຖວາຍອາຫານແດ່ກະສັດເລື້ອຍໆ.
21 ນັບທາລີ ເປັນກວາງແມ່ອິດສະຫລະ ຊຶ່ງມີລູກງາມ.
22 ໂຢເຊັບ ເປັນໂຕລໍປ່າ ເປັນລໍປ່າທີ່ໃຫຍ່ຈາກນໍ້າພຸ
ເປັນມ້ານ້ອຍປ່າຢູ່ເທິງເນີນເຂົາ.
23 ພວກນາຍພານຈະຕາມລ່າລາວຢ່າງໂຫດຮ້າຍ
ພ້ອມທັງໜ້າທະນູ
24 ພວກເຂົາໄລ່ຕາມລາວ
ແຕ່ຄັນທະນູຂອງພວກພານໄດ້ຫັກດິດໄປຢ່າງແຮງ
ເອັນແຂນຂອງພວກພານກໍຂາດ
ກໍຍ້ອນອຳນາດຂອງ ພຣະເຈົ້າຜູ້ຍິ່ງໃຫຍ່ຂອງ ຢາໂຄບ
ຍ້ອນຜູ້ລ້ຽງ ອິສຣາເອນ
ແລະຍ້ອນໂງ່ນຫີນ ອິສຣາເອນ.
25 ດ້ວຍການຊົດຊ່ອຍຂອງ ພຣະບິດາ ເຈົ້າ
ດ້ວຍ ພຣະເຈົ້າ ມີອຳນາດຍິ່ງໃຫຍ່ ຜູ້ຊົງອວຍພອນເຈົ້າ

ຄວາມພອນທີ່ມາກັບຝົນຈາກເບື້ອງເທິງ
ແລະຄວາມພອນທີ່ມາກັບນ້ຳຈາກພື້ນທໍລະນີ
ຄວາມພອນທີ່ມາຈາກເຕົ້ານົມ ແລະທ້ອງແມ່.
26 ຄວາມພອນທີ່ມາຈາກເມັດເຂົ້າ ແລະດອກໄມ້
ຄວາມພອນທີ່ມາຈາກພູເຂົາອັນເກົ່າແກ່
ຄືມາຈາກຄວາມສົມບູນຂອງເນີນເຂົາເປັນນິດ
ຂໍພອນເຫລົ່ານັ້ນຈົ່ງຢູ່ເທິງຫົວຂອງ ໂຢເຊັບ
ຢູ່ເທິງໜ້າຜາກຂອງຜູ້ທີ່ຕ່າງຈາກອ້າຍນ້ອງ.
27 ເບັນຢາມິນ ເປັນໝາໃນລ່າເນື້ອ ເວລາເຊົ້າກໍກິນເຫຍື່ອທີ່ລ່າໄດ້
ແລະຕອນແລງກໍແບ່ງປັນເຫຍື່ອທີ່ລາວຊອກຫາມາໄດ້.”

28ພວກທີ່ໄດ້ເວົ້າມານີ້ແມ່ນສິບສອງຕະກູນ ອິສຣາເອນ ແລະສິ່ງທີ່ເລົ່າມານັ້ນ ແມ່ນຖ້ອຍຄຳ
ທີ່ ຢາໂຄບ ໄດ້ທຳນວາຍໄວ້ໃຫ້ພວກເຂົາ ເພິ່ນໃຫ້ພອນພວກເຂົາຕາມພອນທີ່ແຕ່ລະຄົນສົມຄວນ
ຈະໄດ້ຮັບ.

## ການຕາຍ ແລະການຝັງສົບຂອງຢາໂຄບ

29ດັ່ງນັ້ນ ແລ້ວ ຢາໂຄບ ໄດ້ສັ່ງພວກເຂົາວ່າ, “ບັດນີ້ ພໍ່ໃກ້ຈະສິ້ນໃຈຄືນໄປຢູ່ກັບພວກພີ່ນ້ອງເຮົາທີ່
ຕາຍໄປແລ້ວ ຈົ່ງຝັງພໍ່ໄວ້ກັບປູ່ຍ່າຕາຍາຍຢູ່ໃນຫລຸມຝັງສົບ. 30ຊຶ່ງຢູ່ໃນນາຂອງ ເອຟະໂຣນ
ຊາວ ຮິດຕີ ທີ່ມັກເປລາ ທາງທິດຕາເວັນອອກຂອງ ມາມເຣ ຢູ່ໃນປະເທດ ການາອານ ອັບຣາ-
ຮາມ ໄດ້ຊື້ຖ້ຳໃນທົ່ງນາຂອງ ເອຟະໂຣນ ຊາວ ຮິດຕີ ນັ້ນໄວ້ ເພື່ອເຮັດຖ້ຳຝັງສົບ. 31ແມ່ນໃນບ່ອນ
ນັ້ນເອງທີ່ພວກເຂົາຝັງ ອັບຣາຮາມ ແລະນາງ ຊາຣາ ເມຍຂອງເພິ່ນ ອີຊາກ ແລະນາງ ເຣເບກາ
ເມຍຂອງເພິ່ນ ແລະຂ້ອຍໄດ້ຝັງນາງ ເລອາ ເມຍຂອງຂ້ອຍ
32-33ທົ່ງນາ ແລະຖ້ຳນັ້ນໄດ້ຊື້ມາຈາກຊາວ ຮິດຕີ.” ເມື່ອ ຢາໂຄບ ສັ່ງລູກຊາຍເພິ່ນໝົດແລ້ວ
ເພິ່ນກໍຍໍຕີນຂຶ້ນເທິງຕຽງແລ້ວສິ້ນໃຈຕາຍ ແລະໄປຢູ່ຮ່ວມກັບພີ່ນ້ອງຂອງເພິ່ນ.

# ບົດທີ 50

1ໂຢເຊັບ ແລ່ນອອກກອດຮ່າງກາຍຊຶ່ງປາດສະຈາກວິນຍານທັງຮ້ອງໄຫ້ ແລະຈູບໜ້າຜາກ
ເພິ່ນ. 2ແລ້ວກໍສັ່ງໃຫ້ແພດທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງເພິ່ນອາບນ້ຳຢາຮັກສາສົບ ຢາໂຄບ
ນາຍແພດກໍເຮັດຕາມຄຳສັ່ງນັ້ນທຸກປະການ. 3ພວກເຂົາໃຊ້ເວລາສີ່ສິບມື້ ໃນການອາບນ້ຳຢາ
ຮັກສາສົບນັ້ນບໍ່ໃຫ້ເປື່ອຍເນົ່າ ແລ້ວຊາວ ເອຢິບ ກໍໄວ້ທຸກໃຫ້ເພິ່ນເຈັດສິບມື້.
4ເມື່ອເວລາໄວ້ທຸກສິ້ນສຸດລົງແລ້ວ ໂຢເຊັບ ໄດ້ເວົ້າຕໍ່ຂຸນວັງຂອງ ຟາຣາໂອ ວ່າ, “ຖ້າພວກ
ທ່ານມີຄວາມເມດຕາຕໍ່ຂ້າພະເຈົ້າແລ້ວ ກະລຸນາໄປທູນ ຟາຣາໂອ ໃຫ້ແດ່ວ່າ, 5ເມື່ອພໍ່ຂ້ອຍໃກ້ຈະ
ສິ້ນໃຈຕາຍ ເພິ່ນໄດ້ໃຫ້ຂ້ອຍສັນຍາຕໍ່ເພິ່ນວ່າ ຕ້ອງນຳເອົາສົບຂອງເພິ່ນໄປຝັງໄວ້ໃນ ອຸບໂມງ
ຝັງສົບທີ່ເພິ່ນໄດ້ຂຸດໄວ້ເອງໃນປະເທດ ການາອານ ສະນັ້ນ ຂໍພະອົງຊົງອະນຸຍາດໃຫ້ຂ້ານ້ອຍ
ໄປຝັງສົບພໍ່ຂອງຂ້ອຍກ່ອນ ແລ້ວຂ້ອຍກໍຈະກັບຄືນມາ.” 6ຕໍ່ມາ ຟາຣາໂອ ຊົງຕອບວ່າ, “ຈົ່ງໄປ

ຟັງພໍ່ເຈົ້າຕາມທີ່ເຈົ້າໄດ້ໃຫ້ສັນຍາກັບເພິ່ນ.”
7ດັ່ງນັ້ນ ໂຢເຊັບ ຈຶ່ງໄປຝັງສົບພໍ່ຂອງຕົນ ໂດຍມີບັນດາຂຸນວັງຂອງ ຟາຣາໂອ ທຸກໆຄົນ ລາຊະ
ມົນຕີໃນພະລາຊະວັງ ຜູ້ນຳຂອງຊາວ ເອຢິບ. 8ພ້ອມທັງຄອບຄົວຂອງ ໂຢເຊັບ ທຸກໆຄົນ ພວກ
ອ້າຍແລະຄອບຄົວຂອງພໍ່ໄປນຳເວັ້ນໄວ້ແຕ່ເດັກນ້ອຍ ຝູງແກະ ແບ້ ແລະງົວທີ່ຢູ່ໃນເຂດ ໂກ-
ເຊັນ. 9ນອກນີ້ຍັງມີລົດມ້າ ແລະທະຫານມ້າຕິດຕາມເພິ່ນໄປເປັນຂະບວນແຫ່ຢ່າງຍືດຍາວ.
10ເມື່ອຂະບວນແຫ່ມາຮອດລານເຂົ້າຂອງ ອາຕາດ ຊຶ່ງຢູ່ທາງທິດຕາເວັນອອກຂອງແມ່ນ້ຳຢໍ-
ແດນ ພວກເຂົາກໍພາກັນເຮັດພິທີປົງສົບຢ່າງໃຫຍ່ໂຕ ແລະສົມກຽດ ໂຢເຊັບ ໄດ້ຈັດພິທີໄວ້ທຸກ
ເຈັດມື້. 11ເມື່ອຊາວ ການາອານ ເຫັນການໄວ້ທຸກອັນໃຫຍ່ໂຕທີ່ ອາຕາດ ພວກເຂົາກໍເວົ້າວ່າ,
“ອັນນີ້ແມ່ນພິທີຮ້ອງໄຫ້ໄວ້ທຸກອັນສຳຄັນຂອງຊາວ ມິດຊະຣາຢິມ” ສະນັ້ນ ເຂົາຈຶ່ງໃສ່ຊື່ບ່ອນນັ້ນ
ວ່າ ອາເບັນ-ມິດຊະຣາຢິມ ຊຶ່ງຢູ່ທາງທິດຕາເວັນອອກຂອງແມ່ນ້ຳຢໍແດນ.
12ພວກລູກຫລານຂອງ ຢາໂຄບ ໄດ້ເຮັດຕາມທີ່ ເພິ່ນສັ່ງພວກເຂົາໄວ້ກ່ອນ ແລ້ວທຸກປະການ.
13ພວກເຂົາໄດ້ຫາມສົບຂອງພໍ່ໄປປະເທດ ການາອານ ແລະຝັງໄວ້ໃນອຸບໂມງຝັງສົບໃນ ມັກເປ-
ລາ ທາງທິດຕາເວັນອອກຂອງ ມາມເຣ ຊຶ່ງ ອັບຣາຮາມ ໄດ້ຊື້ນຳ ເອຟະໂຣນ ຊາວ ຮິດຕີ ເພື່ອ
ເອົາໄວ້ເຮັດບ່ອນຝັງສົບ. 14ຫລັງຈາກ ໂຢເຊັບ ຝັງສົບພໍ່ແລ້ວ ເພິ່ນກໍກັບຄືນສູ່ປະເທດ ເອຢິບ
ພ້ອມກັບພວກອ້າຍນ້ອງ ແລະຜູ້ທີ່ຕິດຕາມເພິ່ນໄປທຸກຄົນ.

## ໂຢເຊັບໃຫ້ຄວາມແນ່ໃຈແກ່ພວກອ້າຍ

15ຫລັງຈາກພໍ່ຂອງພວກເຂົາຕາຍແລ້ວ ພວກອ້າຍນ້ອງ ໂຢເຊັບ ກໍພາກັນເວົ້າວ່າ, “ພວກເຮົາ
ຈະເຮັດແນວໃດ ໂຢເຊັບ ອາດຍັງຊັງພວກເຮົາ ແລະຢາກແກ້ແຄ້ນຄວາມຊົ່ວທຸກຢ່າງທີ່ພວກເຮົາ
ໄດ້ເຮັດຕໍ່ລາວ.” 16ດັ່ງນັ້ນພວກເຂົາຈຶ່ງສັ່ງຄວາມໄປຫາ ໂຢເຊັບ ວ່າ, “ພໍ່ໄດ້ສັ່ງຄວາມນີ້ໄວ້ກັບ
ເຮົາໃຫ້ໄປບອກເຈົ້າກ່ອນເພິ່ນຕາຍວ່າ 17ພໍ່ຂໍໃຫ້ເຈົ້າຍົກໂທດຄວາມຜິດ ຊຶ່ງພວກອ້າຍຜູ້ຮັບໃຊ້
ຂອງພໍ່ເຈົ້າໄດ້ເຮັດ.” ເມື່ອເຂົາເວົ້າຄວາມນັ້ນໃຫ້ຟັງແລ້ວ ໂຢເຊັບ ກໍຮ້ອງໄຫ້ຂຶ້ນ. 18ຄັນແລ້ວ
ພວກອ້າຍຂອງເພິ່ນກໍພາກັນມາໂດຍຕົນເອງ ແລ້ວຂາບລົງຕໍ່ໜ້າເພິ່ນເວົ້າວ່າ, “ພວກເຮົາຢູ່ນີ້
ເໝືອນຂ້າໃຊ້ຂອງທ່ານແລ້ວ.” 19ແຕ່ ໂຢເຊັບ ເວົ້າຕໍ່ພວກເຂົາວ່າ, “ຢ່າພາກັນຢ້ານກົວເລີຍ
ຂ້ອຍບໍ່ສາມາດຍົກຕົວຂ້ອຍເອງຂຶ້ນສູ່ບ່ອນຂອງ ພຣະເຈົ້າ ໄດ້. 20ການທີ່ພວກເຈົ້າໄດ້ເຮັດອຸບາຍ
ຊົ່ວຕໍ່ຂ້ອຍນັ້ນ ບັດນີ້ ພຣະເຈົ້າ ໄດ້ຕອບຄືນດ້ວຍການດີ ເພື່ອຮັກສາຊີວິດຂອງປະຊາຊົນທັງມວນ
ໄວ້ ຊຶ່ງມີຊີວິດຢູ່ໄດ້ທຸກມື້ນີ້ກໍຍ້ອນຄວາມດີອັນນີ້. 21ບັດນີ້ ຢ່າສູ່ຢ້ານເລີຍ ຂ້ອຍຈະປົກປັກຮັກ-
ສາພວກເຈົ້າ ພ້ອມທັງລູກຫລານຂອງພວກເຈົ້າ.”

## ໂຢເຊັບເຖິງແກ່ກຳ

22ໂຢເຊັບ ຢູ່ໃນປະເທດ ເອຢິບ ກັບຄອບຄົວພໍ່ຂອງເພິ່ນ ເພິ່ນໄດ້ເຖິງແກ່ກຳໄປເມື່ອອາຍຸຮ້ອຍ
ສິບປີ. 23ເພິ່ນມີຊີວິດຢູ່ຈົນເຫັນລູກ ແລະຫລານຂອງ ເອຟຣາຢິມ ເມື່ອລູກຂອງ ມາກີ ຫລານ
ຂອງ ມານາເຊ ເກີດມາ ໂຢເຊັບກໍຮັບເອົາລາວໄວ້ໃນຄອບຄົວຂອງຕົນ.
24ຕໍ່ມາເພິ່ນເວົ້າຕໍ່ພວກອ້າຍວ່າ, “ຂ້ອຍໃກ້ຈະຕາຍຢູ່ແລ້ວ ແຕ່ ພຣະເຈົ້າ ຈະໂຜດຮັກສາພວກ
ເຈົ້າຢ່າງແນ່ນອນ ແລະຈະພາພວກເຈົ້າໜີອອກຈາກແຜ່ນດິນນີ້ ຄືນສູ່ແຜ່ນດິນທີ່ພຣະອົງໄດ້

ສາບານໄວ້ແລ້ວກັບຢາໂຄບ ອີຊາກ ແລະ ອັບຣາຮາມ." [25]ແລ້ວ ໂຢເຊັບ ກໍໃຫ້ພວກລູກຊາຍຂອງ ອິສຣາເອນ ສາບານ ເພິ່ນເວົ້າວ່າ, "ຈົ່ງສາບານຕໍ່ຂ້ອຍວ່າ ເມື່ອ ພຣະເຈົ້າ ຊົງ ໂຜດຮັກສາພວກ ເຈົ້າ ພວກເຈົ້າຕ້ອງ ເອົາກະດູກຂອງຂ້ອຍໜີຈາກບ່ອນນີ້ໄປກັບພວກເຈົ້າ." [26]ຄັນກ່າວດັ່ງນັ້ນ ແລ້ວ ໂຢເຊັບກໍສິ້ນໃຈຕາຍ ເພິ່ນເຖິງແກ່ກຳໄປໃນເມື່ອອາຍຸຮ້ອຍສິບປີ ພວກເຂົາໄດ້ອາບນໍ້າຢາ ຮັກສາສົບເພິ່ນ ເພື່ອບໍ່ໃຫ້ເປື່ອຍເນົ່າ ແລ້ວເອົາສົບບັນຈຸໃສ່ໂລງເກັບຮັກສາສົບໄວ້ໃນປະເທດ ເອຢິບ.

* * *

# ອົບພະຍົບ

## ບົດທີ 1

### ຊາວອິສຣາເອນຕົກເປັນທາດໃນປະເທດເອຢິບ

1ຕໍ່ໄປນີ້ ແມ່ນລາຍຊື່ລູກຂອງຢາໂຄບ ທີ່ໄດ້ອົບພະຍົບໄປຢູ່ປະເທດ ເອຢິບຄື: 2-3ຣູເບັນ ຊີ-
ເມໂອນ ເລວີ ຢູດາ ອິດຊາຄາ ເຊບູລູນ ເບັນຢາມິນ, 4ດານ ນັບທາລີ ຄາດ ແລະ ອາເຊ
ທຸກຄົນຕ່າງກໍໄດ້ເອົາລູກເອົາເມຍໄປນຳດ້ວຍ, 5ພວກລູກຫລານທີ່ໄປນຳຢາໂຄບ ມີທັງໝົດເຈັດ
ສິບຄົນ ສ່ວນລູກຊາຍ ອີກຜູ້ໜຶ່ງຂອງຢາໂຄບຄື ໂຢເຊັບນັ້ນ ໄດ້ໄປຢູ່ໃນປະເທດ ເອຢິບກ່ອນ
ແລ້ວ. 6ພາຍລຸນມາ ໂຢເຊັບກັບພວກອ້າຍນ້ອງແລະບັນດາຄົນໃນສະໄໝດຽວກັນກໍໄດ້ຕາຍໄປ.
7ແຕ່ເນື່ອງຈາກຊາວ ອິສຣາເອນ ເປັນຄົນມີລູກໄວ ປະຊາຊົນຈຶ່ງເພີ່ມທະວີ ແລະ ມີກຳລັງແຜ່
ຂະຫຍາຍໄປທົ່ວທັງປະເທດນັ້ນ.

8ຕໍ່ມາ ໄດ້ມີກະສັດອົງໃໝ່ຂຶ້ນສະເຫວີຍລາຊະສົມບັດໃນປະເທດ ເອຢິບ ກະສັດອົງນີ້ບໍ່ຊົງຮູ້
ເລື່ອງຫຍັງກ່ຽວກັບ ໂຢເຊັບ. 9ພະອົງໄດ້ປະກາດຕໍ່ປະຊາຊົນຂອງພະອົງວ່າ, “ເບິ່ງດູ ຄົນອິ-
ສຣາເອນ ນັບ ມື້ນັບ ເພີ່ມທະວີ ມີກຳລັງຫລາຍຂຶ້ນ ຊຶ່ງອາດ ຈະ ເປັນອັນຕະລາຍ ແກ່ພວກ ເຮົາ.
10ບັດນີ້ໃຫ້ພວກເຮົາໃຊ້ອຸບາຍອັນເລິກແລບ ເພື່ອຂັດຂວາງບໍ່ໃຫ້ຄົນພວກນີ້ເພີ່ມທະວີຫລາຍຂຶ້ນ
ເພາະວ່າຖ້າຫາກ ເກີດສົງຄາມຂຶ້ນ ເມື່ອໃດ ຄົນພວກນີ້ກໍອາດຈະ ເຂົ້າຮ່ວມມືກັບສັດຕູຫັນມາຕໍ່ສູ້
ເຮົາ ແລ້ວພວກເຂົາກໍຈະໜີອອກຈາກປະເທດນີ້ໄດ້.”

11ດ້ວຍເຫດນີ້ ຝ່າຍກະສັດ ເອຢິບ ຈຶ່ງແຕ່ງຕັ້ງຜູ້ຄວບຄຸມຊາວ ອິສຣາເອນ ເພື່ອບັງຄັບໃຫ້ພວກ
ເຂົາເຮັດວຽກການໜັກ ໃຫ້ເຂົາສ້າງ ເມືອງ ປີໂທມ ແລະ ເມືອງ ຣາເມເສດ ເພື່ອໄວ້ເຄື່ອງຂອງໆ
ກະສັດ ຟາຣາໂອ. 12ເຖິງ ແມ່ນວ່າຊາວ ເອຢິບ ຈະຂົ່ມເຫັງເຂົາຫລາຍປານໃດ ຊາວ ອິສຣາເອນກໍ
ຍິ່ງ ເພີ່ມທະວີຂຶ້ນຫຼາຍ ຈົນຝ່າຍ ເອຢິບ ມີຄວາມຫວັ່ນ ເກງ ໃນ ຈຳນວນ ຄົນພວກນີ້. 13-14ດັ່ງນັ້ນ
ເພື່ອໃຫ້ຊີວິດຂອງ ເຂົາຂົມຂື່ນ ພວກ ເຂົາຈຶ່ງຖືກບັງຄັບໃຫ້ເຮັດວຽກໜັກຈົນ ເຫລືອບ່າກວ່າແຮງ
ເຊັ່ນ ໃຫ້ເຂົານວດດິນ ປັ້ນດິນຈີ່ແລະເຮັດວຽກໜັກຕ່າງໆ ຢູ່ຕາມທົ່ງນາ.

15ຕໍ່ມາ ກະສັດ ເອຢິບ ໄດ້ຊົງບອກນາງຜະດຸງຄັນຊາວ ເຮັບເຣີ ສອງຄົນ ຄົນໜຶ່ງຊື່ຊິຟຣາ
ແລະອີກຄົນໜຶ່ງຊື່ປູອາ ວ່າ, 16“ເມື່ອພວກ ເຈົ້າໄປເອົາລູກອອກໃຫ້ຍິງສາວ ເຮັບເຣີ ຖ້າເດັກ-
ນ້ອຍທີ່ເກີດມານັ້ນຫາກເປັນຜູ້ຊາຍ ໃຫ້ພວກເຈົ້າຂ້າຖິ້ມ ຖ້າເປັນຜູ້ຍິງບໍ່ໃຫ້ຂ້າ.” 17ແຕ່ນາງຜະ-
ດຸງຄັນທັງສອງນັ້ນເປັນຜູ້ຢຳເກງ ພຣະເຈົ້າ ຈຶ່ງບໍ່ໄດ້ເຮັດຕາມພະບັນຊາຂອງກະສັດ ເອຢິບ ພວກ
ນາງໄດ້ປ່ອຍໃຫ້ເດັກນ້ອຍຜູ້ຊາຍມີຊີວິດຢູ່.

18ເມື່ອກະສັດ ເອຢິບ ຊົງຊາບ ດັ່ງນີ້ ກໍມີພະກະແສດຳລັດສັ່ງໃຫ້ນາງຜະດຸງຄັນສອງຄົນເຂົ້າ
ເຝົ້າ ແລ້ວຊົງຖາມວ່າ, “ເປັນຫຍັງພວກ ເຈົ້າຈຶ່ງປ່ອຍໃຫ້ເດັກນ້ອຍຜູ້ຊາຍມີຊີວິດຢູ່?” 19ພວກ
ນາງຜະດຸງຄັນທູນຕອບວ່າ, “ເພາະຜູ້ຍິງຊາວ ເຮັບເຣີບໍ່ຄືຜູ້ຍິງຊາວ ເອຢິບ ຄືພວກເຂົາອອກລູກ
ງ່າຍຫລາຍ ຈົນນາງຜະດຸງຄັນໄປບໍ່ທັນ.” 20-21ດ້ວຍວ່າພວກນາງຜະດຸງຄັນຢຳເກງ ພຣະເຈົ້າ

ພຣະອົງຈຶ່ງຊົງພໍພະໄທພວກນາງ ແລະ ຊົງໂຜດໃຫ້ຄອບຄົວຂອງນາງມີລູກຫລານຫລາຍ ປະ-
ຊາຊົນອິສຣາເອນຈຶ່ງເພີ່ມທະວີຈຳນວນຫລາຍຂຶ້ນ.
22ຕໍ່ມາ ກະສັດຟາຣາໂອຊົງຮັບສັ່ງຕໍ່ປະຊາຊົນຂອງພະອົງວ່າ, "ລູກຊາຍຊາວເຮັບເຣີທຸກຄົນ
ທີ່ເກີດມາ ໃຫ້ເອົາໄປຖິ້ມໃນແມ່ນ້ຳນິນເສຍ ແຕ່ລູກຜູ້ຍິງທຸກຄົນໃຫ້ມີຊີວິດຢູ່."

# ບົດທີ 2

## ໂມເຊເກີດ ແລະ ໄດ້ຮັບການຊ່ວຍເຫລືອ

1ຍັງມີຊາຍເຜົ່າເລວີຄົນໜຶ່ງໄດ້ແຕ່ງງານກັບຍິງສາວເຜົ່າດຽວກັນ. 2ຕໍ່ມາຍິງຜູ້ນີ້ໄດ້ຖືພາແລະ
ອອກລູກເປັນຜູ້ຊາຍ ເມື່ອນາງເຫັນວ່າລູກທີ່ເກີດມານັ້ນ ມີຮູບຮ່າງງາມ ກໍເຊື່ອງລູກໄວ້ເຖິງສາມ
ເດືອນ. 3ເມື່ອນາງບໍ່ສາມາດຈະເຊື່ອງໄວ້ຕໍ່ໄປໄດ້ອີກ ນາງກໍເອົາໄມ້ມາເຮັດອູ່ ທາດ້ວຍຢາງມາ
ໃສ່ລູກນ້ອຍນັ້ນ ແລ້ວນຳໄປໄວ້ເທິງນ້ຳບ່ອນທີ່ມີກໍຫຍ້າແຄມຕາຝັ່ງ. 4ສ່ວນເອື້ອຍຂອງເດັກນ້ອຍ
ນັ້ນໄດ້ໄປຢືນຊອມຢູ່ຫ່າງໄກ ເພາະຢາກຮູ້ວ່າ ຈະມີຫຍັງເກີດຂຶ້ນກັບນ້ອງຂອງຕົນ.
5ຕໍ່ມາພະລາຊະທິດາຂອງກະສັດຟາຣາໂອ ໄດ້ສະເດັດໄປສົງນ້ຳທີ່ແມ່ນ້ຳນິເລ ແລ້ວໃນຂະ-
ນະທີ່ພວກສາວໃຊ້ຍ່າງໄປໃກ້ແມ່ນ້ຳ ພະນາງກໍຊົງຫລຽວເຫັນອູ່ຢູ່ກາງກໍຫຍ້າ ຈຶ່ງຮັບສັ່ງໃຫ້ສາວ
ໃຊ້ໄປເອົາມາ. 6ເມື່ອສາວໃຊ້ນຳມາຖວາຍ ພະນາງກໍຊົງເປີດເບິ່ງ ຈຶ່ງຊົງເຫັນເດັກນ້ອຍຜູ້ຊາຍ
ນອນຢູ່ ເດັກນ້ອຍນັ້ນໄດ້ຮ້ອງໄຫ້ຂຶ້ນ ພະນາງຊົງເກີດຄວາມສົງສານ ແລະ ຊົງກ່າວວ່າ, "ນີ້
ແມ່ນລູກຊາຍຂອງຊາວເຮັບເຣີ".
7ຝ່າຍເອື້ອຍຂອງເດັກນ້ອຍນັ້ນໄດ້ທູນຖາມພະລາຊະທິດາຂອງກະສັດຟາຣາໂອວ່າ, "ພະ
ນາງບໍ່ຢາກໃຊ້ຂ້ານ້ອຍໄປຫາແມ່ຍິງຊາວເຮັບເຣີມາລ້ຽງເດັກນ້ອຍຜູ້ນີ້ແນ່ບໍ?" 8ພະນາງກໍຊົງ
ຕອບວ່າ, "ໄປແມ" ຍິງສາວຜູ້ນັ້ນຈຶ່ງໄປເອີ້ນເອົາແມ່ຂອງເດັກນ້ອຍນັ້ນມາ. 9ຝ່າຍພະລາຊະທິ-
ດາຂອງກະສັດຟາຣາໂອໄດ້ຊົງຮັບສັ່ງແກ່ຍິງນັ້ນວ່າ, "ເຈົ້າຈົ່ງເອົາເດັກຜູ້ນີ້ໄປລ້ຽງໃຫ້ຂ້ອຍແດ່
ຂ້ອຍຈະໃຫ້ຄ່າຈ້າງເຈົ້າ. ຍິງຜູ້ນັ້ນ ຈຶ່ງຮັບເອົາເດັກນ້ອຍຊຶ່ງເປັນລູກຂອງຕົນ ໄປລ້ຽງໄວ້.
10ເມື່ອເດັກນ້ອຍນັ້ນໃຫຍ່ສູງຂຶ້ນແດ່ແລ້ວ ນາງກໍນຳມາມອບໃຫ້ພະລາຊະທິດາ ພະນາງກໍຊົງ
ຮັບເອົາເປັນພະລາຊະບຸດ ແລະ ຊົງປະທານຊື່ວ່າ ໂມເຊ ໂດຍພະນາງຊົງກ່າວວ່າ, "ເພາະເຮົາ
ໄດ້ຍົກຂຶ້ນມາຈາກນ້ຳ."

## ໂມເຊໜີຈາກປະເທດເອຢິບ

11ຢູ່ມາວັນໜຶ່ງ ເມື່ອໂມເຊໃຫຍ່ແລ້ວ ລາວໄດ້ອອກໄປຢ້ຽມຢາມພວກພີ່ນ້ອງທີ່ເປັນຊາດດຽວ
ກັນກັບຕົນ ລາວໄດ້ເຫັນເຂົາຖືກບັງຄັບໃຫ້ເຮັດວຽກຢ່າງໜັກ ແລະ ເຫັນຊາວເອຢິບຄົນໜຶ່ງຂ້າ
ຕີຊາວເຮັບເຣີຄົນໜຶ່ງ ຊຶ່ງເປັນຊາດດຽວກັນກັບຕົນ. 12ໂມເຊຈຶ່ງຫລຽວໜ້າຫລຽວຫລັງ ເມື່ອບໍ່
ເຫັນຜູ້ໃດຢູ່ທີ່ນັ້ນ ກໍຈັດການຂ້າຄົນເອຢິບນັ້ນເສຍ ແລ້ວຝັງສົບເຊື່ອງໄວ້ໃນດິນຊາຍ. 13ວັນຕໍ່
ມາໂມເຊໄດ້ອອກໄປອີກ ເທື່ອນີ້ລາວໄດ້ພົບຄົນເຮັບເຣີສອງຄົນກຳລັງຕີກັນຢູ່ ລາວຈຶ່ງຖາມຜູ້ທີ່
ລາວຄິດວ່າເປັນຄົນຜິດນັ້ນວ່າ ເປັນຫຍັງຈຶ່ງຕີຄົນຊາດດຽວກັນ?"
14ຄົນຜູ້ນັ້ນກໍຕອບວ່າ, "ໃຜເປັນຜູ້ແຕ່ງຕັ້ງໃຫ້ເຈົ້າເປັນເຈົ້ານາຍມາຕັດສິນພວກເຮົາ ເຈົ້າຈະ

ຂ້າຂ້ອຍຄືກັບທີ່ໄດ້ຂ້າຄົນ ເອຢິບ ຜູ້ນັ້ນບໍ?" ໂມເຊ ເລີຍຕົກໃຈພ້ອມກັບຄິດວ່າ, "ໂທ! ເລື່ອງນີ້ໄດ້
ມີຄົນຮູ້ເຫັນແລ້ວເປັນແນ່." 15ເມື່ອກະສັດ ຟາຣາໂອ ໄດ້ຊົງຊາບ ເລື່ອງນີ້ກໍຫາຊ່ອງທາງທີ່ຈະຂ້າ
ໂມເຊ ເສຍ ແຕ່ ໂມເຊ ໄດ້ ເອົາຕົວໜີໄປຢູ່ປະເທດ ມີດີອານ ເສຍກ່ອນ. ເວລາ ໂມເຊ ໄປເຖິງປະ-
ເທດ ມີດີອານ ລາວໄດ້ໄປນັ່ງຢູ່ໃກ້ນໍ້າສ້າງແຫ່ງໜຶ່ງ.

16ແລ້ວມີລູກສາວເຈັດຄົນຂອງ ເຣອູເອນ ຜູ້ເປັນປະໂລຫິດໃນປະເທດ ມີດີອານ ໄດ້ພາກັນມາ
ຕັກນໍ້າໃຫ້ຝູງແບ້ ແລະ ແກະຂອງພວກຕົນກິນ. 17ແຕ່ພວກລ້ຽງສັດໄດ້ມາຂັບໄລ່ພວກນາງໜີ
ໂມເຊ ຈຶ່ງເຂົ້າໄປຊ່ອຍຕັກນໍ້າໃຫ້ສັດຂອງພວກນາງກິນ. 18ເມື່ອຜູ້ສາວເຫລົ່ານີ້ກັບຄືນເມືອ ເຣອູ-
ເອນ ພໍ່ຂອງເຂົາກໍຖາມວ່າ, "ເປັນຫຍັງມື້ນີ້ຈຶ່ງກັບມາໄວແທ້?" 19ຝ່າຍລູກສາວກໍຕອບວ່າ, "ມີຄົນ
ເອຢິບ ຜູ້ໜຶ່ງ ໄດ້ຊ່ອຍເຫລືອພວກເຮົາໃຫ້ພົ້ນຈາກການຂົ່ມເຫັງຂອງຄົນລ້ຽງສັດ ທັງໄດ້ຊ່ອຍຕັກ
ນໍ້າໃຫ້ສັດຂອງພວກເຮົາກິນດ້ວຍ." 20ພໍ່ໄດ້ຖາມລູກສາວຕໍ່ໄປວ່າ, "ຊາຍຜູ້ນັ້ນຢູ່ໃສ? ເປັນຫຍັງ
ຈຶ່ງມາປະລາວ? ຮີບໄປເຊີນລາວມາກິນເຂົ້ານໍາເຮົາ."

21ຝ່າຍ ໂມເຊ ຈຶ່ງໄດ້ມາຫາ ເຣອູເອນ ແລະ ຍິນດີຢູ່ນໍາເລີຍ ເຣອູເອນ ໄດ້ຍົກຊິບໂປຣາ ລູກ
ສາວຂອງຕົນໃຫ້ເປັນເມຍ ໂມເຊ. 22ນາງ ຊິບໂປຣາ ໄດ້ເກີດລູກຊາຍຜູ້ໜຶ່ງ ໂມເຊ ຈຶ່ງໃສ່ຊື່ໃຫ້ລູກ
ຊາຍຜູ້ນີ້ວ່າ ເກໂຊມ ເພາະ ໂມເຊ ຄິດວ່າ, "ຂ້າພະເຈົ້າເປັນຄົນຕ່າງປະເທດທີ່ມາອາໄສຢູ່ໃນປະ-
ເທດນີ້."

23ເມື່ອຫລາຍປີຜ່ານໄປ ກະສັດ ເອຢິບ ກໍສິ້ນພະຊົນ ຊາວ ອິສຣາເອນ ກໍຍັງຮ້ອງຄາງຍ້ອນ
ຄວາມເປັນທາດເຂົາໄດ້ຮ້ອງຂໍຄວາມຊ່ອຍເຫລືອ ສຽງຮ້ອງຂໍຂອງເຂົາໄດ້ດັງຂຶ້ນໄປເຖິງ ພຣະ-
ເຈົ້າ. 24ເມື່ອ ພຣະເຈົ້າ ຊົງໄດ້ຍິນສຽງຮ້ອງຄາງຂອງເຂົາ ກໍຊົງລະນຶກເຖິງຄໍາໝັ້ນສັນຍາທີ່ພຣະ-
ອົງ ໄດ້ຊົງ ໃຫ້ໄວ້ກັບ ອັບຣາຮາມ ອີຊາກ ແລະ ຢາໂຄບ. 25ພຣະອົງ ໄດ້ຊົງທອດພະເນດ ເຫັນ
ແລະ ສົນພະໄທໃນຄວາມທຸກຍາກລໍາບາກຂອງຊາວ ອິສຣາເອນ ເຫລົ່າ ນັ້ນ.

# ບົດທີ 3

## ພຣະເຈົ້າຊົງເອີ້ນໂມເຊ

1ວັນໜຶ່ງ ເມື່ອ ໂມເຊ ລ້ຽງຝູງແກະຂອງ ເຢດໂຣ ພໍ່ເຖົ້າຂອງຕົນ ຜູ້ເປັນປະໂລຫິດຂອງຊາວ
ມີດີອານ ລາວໄດ້ພາຝູງສັດນັ້ນຂ້າມຖິ່ນກັນດານມາຍັງ ໂຮເຣັບ ພູຂອງ ພຣະເຈົ້າ. 2ຂະນະນັ້ນ
ທູດຂອງ ພຣະຜູ້ເປັນເຈົ້າ ໄດ້ປະກົດ ເປັນ ແປວໄຟໃຫ້ ໂມເຊ ເຫັນຢູ່ກາງພຸ່ມໄມ້ ໂມເຊ ຈຶ່ງຫລຽວ
ເບິ່ງໄຟນັ້ນດ້ວຍຄວາມປະຫລາດໃຈ ແຕ່ບໍ່ເຫັນວ່າພຸ່ມໄມ້ນັ້ນຖືກໄໝ້. 3ໂມເຊ ຈຶ່ງເວົ້າກັບຕົວເອງ
ວ່າ, "ບ໊ະ! ຕ້ອງເຂົ້າໄປເບິ່ງແສງປະຫລາດນີ້ໃກ້ໆເສຍກ່ອນ ເພາະຢາກຮູ້ວ່າເປັນຫຍັງໄຟລຸກຢູ່
ພຸ່ມໄມ້ຈຶ່ງບໍ່ໄໝ້." 4ເມື່ອ ພຣະຜູ້ເປັນເຈົ້າ ຊົງເຫັນ ໂມເຊ ຍ່າງເຂົ້າມາໃກ້ ພຣະອົງກໍຊົງ ເອີ້ນອອກ
ມາຈາກພຸ່ມໄມ້ນັ້ນວ່າ, "ໂມເຊ ໂມເຊ ເອີຍ!" ໂມເຊ ໄດ້ທູນຕອບວ່າ, "ຂ້າພະອົງຢູ່ທີ່ນີ້" 5ພຣະ-
ເຈົ້າ ຈຶ່ງຊົງບອກວ່າ, "ຢ່າຫຍັບເຂົ້າມາໃກ້ ຈົ່ງຖອດເກີບອອກເສຍ ເພາະບ່ອນທີ່ເຈົ້າຢືນຢູ່ທີ່ນີ້
ເປັນບ່ອນສັກສິດ." 6ພຣະອົງຊົງບອກຕໍ່ໄປອີກວ່າ, "ເຮົາເປັນ ພຣະເຈົ້າ ຂອງພໍ່ເຈົ້າ ຂອງອັບ-
ຣາຮາມ ຂອງ ອີຊາກ ແລະຂອງ ຢາໂຄບ" ແລ້ວ ໂມເຊ ໄດ້ເຊື່ອງໜ້າເພາະບໍ່ກ້າຫລຽວເບິ່ງ

ພຣະເຈົ້າ.

[7]ຕໍ່ມາ ພຣະຜູ້ເປັນເຈົ້າໄດ້ຊົງກ່າວວ່າ, "ເຮົາໄດ້ເຫັນຄວາມຕົກທຸກໄດ້ຍາກແຫ່ງໄພ່ພົນຂອງ
ເຮົາໃນ ເອຢິບຢ່າງຄັກແນ່ແລ້ວ ແລະ ໄດ້ຍິນສຽງຮ້ອງຂໍຄວາມຊ່ອຍເຫລືອຂອງເຂົາຍ້ອນນາຍ
ຄຸມຂົ່ມເຫັງດ້ວຍ. ເຮົາຮູ້ຈັກຄວາມທຸກຍາກຂອງເຂົາທີ່ສຸດ. [8]ເຮົາລົງມາຊ່ອຍເຂົາໃຫ້ພົ້ນຈາກ
ເງື້ອມມືຂອງຊາວ ເອຢິບ ເພື່ອນຳພາພວກເຂົາໄປຍັງແຜ່ນດິນອັນອຸດົມສົມບູນ ແລະ ກວ້າງ-
ຂວາງ ຄືແຜ່ນດິນຂອງຊາວ ການາອານ ຊາວ ຮິດຕີ ຊາວ ອະໂມຣິດ ຊາວ ເປຣີຊີ ຊາວ ຮີວີ
ແລະ ຊາວ ເຢບຸດ. [9]ສຽງຮ້ອງຂໍຂອງຊາວ ອິສຣາເອນ ໄດ້ມາເຖິງເຮົາແລ້ວ ເຮົາໄດ້ເຫັນຊາວ ອິ-
ສຣາເອນ ຖືກກົດຂີ່ຂົ່ມເຫັງ. [10]ບັດນີ້ເຮົາ ຈະສົ່ງເຈົ້າໄປເຝົ້າກະສັດ ຟາຣາໂອ ເພື່ອໃຫ້ເຈົ້າເປັນ
ຜູ້ນຳພາ ອິສຣາເອນ ໄພ່ພົນຂອງເຮົາອອກຈາກປະເທດ ເອຢິບ."

[11]ຝ່າຍ ໂມເຊ ໄດ້ກາບທູນ ພຣະເຈົ້າ ວ່າ, "ຂ້ານ້ອຍເປັນຄົນທຳມະດາ ຈະໄປເຝົ້າກະສັດ ຟາ-
ຣາໂອ ແລະນຳຊາວ ອິສຣາເອນ ອອກຈາກ ເອຢິບ ໄດ້ແນວໃດ?" [12]ພຣະອົງຊົງຕອບວ່າ, "ເຮົາ
ຈະຢູ່ນຳເຈົ້າ ໝາຍສຳຄັນຕໍ່ໄປນີ້ຈະບອກໃຫ້ເຈົ້າຮູ້ວ່າແມ່ນເຮົາແທ້ໄດ້ສົ່ງເຈົ້າໄປ ຄືເມື່ອເຈົ້ານຳ-
ພາຊາວ ອິສຣາເອນ ອອກຈາກ ເອຢິບ ແລ້ວ ພວກເຈົ້າຈະໄດ້ຂາບໄຫວ້ເຮົາຢູ່ເທິງພູນີ້."

[13]ແລ້ວ ໂມເຊ ໄດ້ທູນຖາມ ພຣະເຈົ້າ ວ່າ, "ເມື່ອຂ້ານ້ອຍໄປເຖິງຊາວ ອິສຣາເອນ ແລະ ບອກ
ເຂົາວ່າ ພຣະເຈົ້າ ແຫ່ງບັນພະບູລຸດຂອງພວກທ່ານໄດ້ສົ່ງຂ້າພະເຈົ້າມາຫາທ່ານ ພວກເຂົາກໍຈະ
ຖາມຂ້ານ້ອຍວ່າ ພຣະເຈົ້າ ອົງນັ້ນຊົງພຣະນາມວ່າແນວໃດ? ແລ້ວຂ້ານ້ອຍຈະຕອບເຂົາວ່າຈັ່ງ
ໃດ ຖ້າພຣະອົງບໍ່ບອກພຣະນາມຂອງພຣະອົງໃຫ້ຂ້ານ້ອຍຮູ້ເສຍກ່ອນ"

[14]ພຣະເຈົ້າ ຈຶ່ງຊົງບອກ ໂມເຊ ວ່າ, "ເຮົາເປັນຜູ້ຊຶ່ງເຮົາເປັນ" ພຣະອົງຊົງກ່າວຕໍ່ໄປວ່າ ໃຫ້
ເຈົ້າໄປບອກຊາວ ອິສຣາເອນ ວ່າ, "ຜູ້ຊື່ວ່າເຮົາເປັນ" ໄດ້ສົ່ງຂ້າພະເຈົ້າມາຫາທ່ານທັງຫລາຍ.
[15]ພຣະເຈົ້າ ຍັງຊົງບອກ ໂມເຊ ອີກວ່າ, "ໃຫ້ເຈົ້າບອກຊາວ ອິສຣາເອນ ວ່າ ພຣະຜູ້ເປັນເຈົ້າ ແຫ່ງ
ບັນພະບູລຸດຂອງທ່ານທັງຫລາຍ ຄື ພຣະເຈົ້າ ຂອງ ອັບຣາຮາມ ຂອງ ອີຊາກ ແລະ ຢາໂຄບ
ໄດ້ສົ່ງຂ້າພະເຈົ້າມາຫາທ່ານທັງຫລາຍ. ອັນນີ້ແຫລະ ແມ່ນຊື່ຂອງເຮົາ ຊື່ອັນນີ້ຈະບໍ່ປ່ຽນແປງ
ຕະຫລອດໄປເປັນນິດ ແຕ່ຈະເປັນຢູ່ຢ່າງນີ້ທຸກຊົ່ວອາຍຸຄົນ.

[16]ເຈົ້າຈົ່ງໄປຮ່ວມປະຊຸມກັບພວກເຖົ້າແກ່ ອິສຣາເອນ ແລະ ບອກເຂົາວ່າ ພຣະເຈົ້າ ແຫ່ງ
ບັນພະບູລຸດຂອງທ່ານທັງຫລາຍ ຄື ພຣະເຈົ້າ ຂອງ ອັບຣາຮາມ ຂອງ ອີຊາກ ແລະຂອງ ຢາໂຄບ
ໄດ້ປະກົດຕໍ່ໜ້າຂ້າພະເຈົ້າ ບອກຂ້າພະເຈົ້າວ່າ ເຮົາໄດ້ມາຫາເຈົ້າ ແລະໄດ້ເຫັນສິ່ງທີ່ຊາວ ເອ-
ຢິບ ປະພຶດຕໍ່ພວກເຈົ້າແລ້ວ. [17]ເຮົາໄດ້ຕັດສິນໃຈແລ້ວວ່າ ຈະນຳພວກເຈົ້າອອກຈາກປະເທດ
ເອຢິບ ຄືບ່ອນທີ່ພວກເຈົ້າທຸກຍາກລຳບາກນີ້ ໄປຍັງແຜ່ນດິນຂອງຊາວ ການາອານ ຊາວ ຮິດຕີ
ຊາວ ອະໂມຣິດ ຊາວ ເປຣີຊີ ຊາວ ຮີວີ ແລະຊາວ ເຢບຸດ ຊຶ່ງເປັນ ແຜ່ນດິນທີ່ອຸດົມສົມບູນ
ແລ້ວເຂົາຈະເຊື່ອຟັງຄຳຂອງເຈົ້າ.

[18]ແລ້ວເຂົາຈະເຊື່ອຟັງຄຳຂອງເຈົ້າ. ເຈົ້າກັບພວກເຖົ້າແກ່ຊາວ ອິສຣາເອນ ຈົ່ງພາກັນໄປເຝົ້າ
ກະສັດຂອງ ເອຢິບ ແລະ ທູນວ່າ ພຣະຜູ້ເປັນເຈົ້າ ຂອງຊາວ ເຮັບເຣີ ໄດ້ຊົງປະກົດຕໍ່ພວກຂ້າ-
ນ້ອຍ ບັດນີ້ຂໍພະອົງຊົງ ໂຜດໃຫ້ພວກຂ້ານ້ອຍເຂົ້າໄປໃນຖິ່ນກັນດານ ຊຶ່ງເປັນໄລຍະທາງຢ່າງ

ສາມມື້ ເພື່ອຖວາຍສັດບູຊາແກ່ພຣະຜູ້ເປັນເຈົ້າຂອງພວກຂ້ານ້ອຍ. [19]ເຮົາຮູ້ແລ້ວວ່າ ກະສັດ
ເອຢິບຈະບໍ່ຍອມໃຫ້ພວກເຈົ້າໄປ ເວັ້ນໄວ້ແຕ່ຈະໃຊ້ອຳນາດບັງຄັບ ກະສັດຈຶ່ງຈະຍອມ [20]ຄືເຮົາ
ຈະໃຊ້ຣິດອຳນາດກະທຳການອັດສະຈັນລົງໂທດຄົນເອຢິບ ແລ້ວກະສັດເອຢິບກໍຈະຍອມປ່ອຍ
ໃຫ້ພວກເຈົ້າໄປ.

[21]ເຮົາຈະເຮັດໃຫ້ໄພ່ພົນຂອງເຮົາໄດ້ຮັບຄວາມນັບຖືຈາກຊາວເອຢິບ ເພື່ອບໍ່ໃຫ້ພວກເຈົ້າໄປ
ດ້ວຍມືເປົ່າ. [22]ໃຫ້ຜູ້ຍິງທຸກຄົນຂໍເຄື່ອງເງິນ ເຄື່ອງຄຳ ແລະ ຂໍເສື້ອຜ້າຈາກຜູ້ຍິງທີ່ຢູ່ໃນເຮືອນ
ຫລື ຈາກເພື່ອນບ້ານຂອງຕົນ ແລ້ວໃຫ້ເອົາເຄື່ອງເອ້ເຫລົ່ານີ້ໄປຕົກແຕ່ງໃຫ້ລູກຊາຍຍິງຂອງ
ພວກເຈົ້າ ດ້ວຍການກະທຳຢ່າງນີ້ ພວກເຈົ້າຈຶ່ງຈະໄດ້ສິ່ງຂອງຈາກຊາວເອຢິບໄປ.”

# ບົດທີ 4

[1]ໂມເຊໄດ້ທູນຕອບວ່າ, “ຖ້າສົມມຸດວ່າຄົນອິສຣາເອນບໍ່ເຊື່ອຟັງຂ້ານ້ອຍ ຄືບໍ່ເຊື່ອວ່າພຣະອົງ
ໄດ້ປະກົດຕໍ່ຂ້ານ້ອຍ ແລ້ວຂ້ານ້ອຍຈະເຮັດແນວໃດ?” [2]ພຣະຜູ້ເປັນເຈົ້າຊົງຖາມໂມເຊວ່າ,
“ແມ່ນຫຍັງທີ່ເຈົ້າຖືຢູ່ນັ້ນ?” ໂມເຊກາບທູນວ່າ, “ໄມ້ເທົ້າ, ຂ້ານ້ອຍ”. [3]ພຣະຜູ້ເປັນເຈົ້າຈຶ່ງຊົງ
ບອກວ່າ, “ຖິ້ມມັນລົງດິນເບິ່ງດູ” ພໍໂມເຊຖິ້ມລົງ ໄມ້ເທົ້ານັ້ນກໍກາຍເປັນງູ ໂມເຊຢ້ານຈຶ່ງຫລົບ-
ໜີໄປ. [4]ພຣະຜູ້ເປັນເຈົ້າຊົງບອກໂມເຊວ່າ, “ຈົ່ງກົ້ມລົງຈັບຫາງງູໄວ້” ພໍໂມເຊກົ້ມລົງຈັບ ງູນັ້ນ
ກໍກາຍເປັນໄມ້ເທົ້າຕາມເດີມ. [5]ພຣະຜູ້ເປັນເຈົ້າຈຶ່ງຊົງກ່າວວ່າ, “ໃຫ້ເຈົ້າເຮັດຢ່າງນີ້ ເພື່ອຈະໃຫ້
ຊາວອິສຣາເອນເຊື່ອວ່າ ພຣະຜູ້ເປັນເຈົ້າແຫ່ງບັນພະບູລຸດຂອງເຂົາ ຄືພຣະເຈົ້າຂອງອັບຣາ-
ຮາມ ຂອງອີຊາກ ແລະ ຂອງຢາໂຄບໄດ້ປະກົດຕໍ່ເຈົ້າແທ້.”

[6]ຕໍ່ມາ ພຣະຜູ້ເປັນເຈົ້າຊົງບອກໂມເຊອີກວ່າ, “ຈົ່ງເອົາມືສອດເຂົ້າໄປໃນເສື້ອຜ້າໜ້າເອິກ”
ໂມເຊກໍເຮັດຕາມ ເມື່ອໂມເຊເອົາມືອອກມາກໍເຫັນວ່າ ມືຂອງຕົນເປັນພະຍາດ ຄືເປັນດອກຂາວ
ເໝືອນນວນຝ້າຍ. [7]ແລ້ວພຣະຜູ້ເປັນເຈົ້າຊົງບອກວ່າ, “ໃຫ້ເອົາມືສອດເຂົ້າໄປໃນເສື້ອຜ້າໜ້າ
ເອິກອີກເທື່ອໜຶ່ງ” ໂມເຊກໍສອດເຂົ້າໄປ ເມື່ອລາວເອົາມືອອກມາ ກໍເຫັນມືຂອງຕົນສະອາດດີຄື-
ເກົ່າ. [8]ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ຖ້າເຂົາບໍ່ເຊື່ອເຈົ້າ ຫລື ບໍ່ເຊື່ອການກະທຳເທື່ອທີໜຶ່ງ ເຂົາ
ອາດຈະເຊື່ອການກະທຳເທື່ອທີສອງ ຖ້າເຂົາບໍ່ເຊື່ອການກະທຳທັງສອງຢ່າງນີ້. [9]ຖ້າເຂົາບໍ່ເຊື່ອ
ການກະທຳທັງສອງຢ່າງນີ້ ທັງບໍ່ຍອມຟັງສຽງຂອງເຈົ້າ ເຈົ້າຈົ່ງຕັກເອົານ້ຳໃນແມ່ນ້ຳໄປເທໃສ່
ດິນແຫ້ງ ແລ້ວນ້ຳນັ້ນຈະກາຍເປັນເລືອດ.”

[10]ຝ່າຍໂມເຊໄດ້ກາບທູນພຣະຜູ້ເປັນເຈົ້າຕໍ່ໄປວ່າ, “ຂ້າແດ່ພຣະຜູ້ເປັນເຈົ້າ ຂ້ານ້ອຍເປັນ
ຄົນເວົ້າບໍ່ເກັ່ງ ຄືໃນຄາວກ່ອນກໍດີ ຫລື ຕັ້ງແຕ່ເວລາທີ່ພຣະອົງຊົງກ່າວກັບຂ້ານ້ອຍແລ້ວກໍດີ
ຂ້ານ້ອຍເປັນຄົນເວົ້າບໍ່ລ່ຽນໄຫລເລີຍ.”

[11]ພຣະຜູ້ເປັນເຈົ້າຊົງຖາມໂມເຊວ່າ, “ໃຜສ້າງປາກມະນຸດ? ໃຜເຮັດໃຫ້ເຂົາປາກກືກ ຫູ-
ໜວກ ຕາດີ ຫລື ຕາບອດ ບໍ່ແມ່ນເຮົາບໍ? [12]ດ້ວຍເຫດນີ້ເຈົ້າຈົ່ງໄປເສຍ ເຮົາຈະຊ່ວຍເຈົ້າເວົ້າ
ແລະຈະບອກເລື່ອງໃຫ້ເຈົ້າເວົ້າ.

[13]ແຕ່ໂມເຊທູນຂໍອີກວ່າ, “ຂ້າແດ່ພຣະຜູ້ເປັນເຈົ້າ ຂໍພຣະອົງຊົງສົ່ງຜູ້ອື່ນໄປສາ.”

14ພໍໂມເຊເວົ້າດັ່ງນີ້ ພຣະຜູ້ເປັນເຈົ້າກໍຊົງໂກດຮ້າຍໂດຍຊົງກ່າວວ່າ, "ອາໂຣນຄົນເລວີເປັນ
ອ້າຍຂອງເຈົ້າແມ່ນບໍ? ເຮົາຮູ້ວ່າລາວເປັນຄົນເວົ້າເກັ່ງ ບັດນີ້ລາວກຳລັງຍ່າງມາພົບເຈົ້າ ລາວ
ຈະດີໃຈຫລາຍທີ່ໄດ້ພົບເຈົ້າ.

15ເຈົ້າຈົ່ງເວົ້າກັບລາວ ແລະ ບອກເລື່ອງໃຫ້ລາວເວົ້າ ຝ່າຍເຮົາຈະຊ່ອຍພວກເຈົ້າເວົ້າ ກັບ
ທັງຈະຊ່ອຍພວກເຈົ້າທັງສອງໃຫ້ຮູ້ວ່າ ຄວນຈະເຮັດແນວໃດ. 16ອາໂຣນຈະເປັນຜູ້ເວົ້າກັບປະ-
ຊາຊົນແທນເຈົ້າ ລາວຈະເປັນໂຄສົກຂອງເຈົ້າ ເຈົ້າຈະເປັນເໝືອນພຣະເຈົ້າ ເພື່ອບອກສິ່ງທີ່
ຄວນເວົ້າແກ່ລາວ. 17ເຈົ້າຈົ່ງຖືເອົາໄມ້ເທົ້ານີ້ ເພື່ອກະທຳການອັດສະຈັນເຫລົ່ານັ້ນ."

## ໂມເຊກັບຄືນເອຢິບ

18ຫລັງຈາກນັ້ນ ໂມເຊກັບຄືນໄປຫາເຢດໂຣພໍ່ເຖົ້າຂອງຕົນ ເພື່ອຂໍລາກັບຄືນໄປຍັງເອຢິບ
ໂມເຊເວົ້າວ່າ, "ຂ້ອຍຂໍລາກັບໄປຢ້ຽມຢາມ ພີ່ນ້ອງໃນປະເທດເອຢິບ ເພື່ອຢາກຮູ້ວ່າເຂົາຍັງມີ
ຊີວິດຢູ່ ຫລື ບໍ່?" ຝ່າຍເຢດໂຣກໍບອກລູກເຂີຍວ່າ "ຈົ່ງໄປດີສາ". 19ຕໍ່ມາພຣະຜູ້ເປັນເຈົ້າຊົງ
ກ່າວກັບໂມເຊໃນເມືອງມີດີອານວ່າ, "ຈົ່ງກັບຄືນໄປຍັງເອຢິບເສຍ ເພາະຈຳພວກຄົນທີ່ຢາກ
ຂ້າເຈົ້າກໍຕາຍໝົດແລ້ວ." 20ໂມເຊຈຶ່ງຈັດແຈ່ງໃຫ້ລູກເມຍຂຶ້ນຂີ່ລໍກັບຄືນໄປ ເອຢິບ ສ່ວນໂມເຊ
ກໍຖືໄມ້ເທົ້າທີ່ພຣະເຈົ້າໄດ້ຊົງປະທານໃຫ້. 21ແລ້ວພຣະຜູ້ເປັນເຈົ້າຊົງກ່າວກັບໂມເຊວ່າ, "ເມື່ອ
ເຈົ້າຄືນໄປເຖິງເອຢິບ ເຈົ້າຈົ່ງກະທຳການອັດສະຈັນຕໍ່ໜ້າກະສັດຟາຣາໂອຕາມສິດທີ່ເຮົາໄດ້
ມອບໃຫ້ເຈົ້ານັ້ນ ຝ່າຍເຮົາຈະເຮັດໃຫ້ກະສັດຟາຣາໂອດື້ດ້ານ ບໍ່ຍອມປ່ອຍປະຊາຊົນໄປ.
22ແລ້ວໃຫ້ເຈົ້າບອກກະສັດຟາຣາໂອວ່າ ພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້: ຄົນອິສຣາເອນເປັນ
ລູກກົກຂອງເຮົາ. 23ເຮົາບອກເຈົ້າວ່າ ຈົ່ງປ່ອຍລູກຂອງເຮົາໄປບົວລະບັດເຮົາ ຖ້າເຈົ້າບໍ່ຍອມໃຫ້
ລູກເຮົາໄປ ເຮົາກໍຈະຂ້າລູກກົກຂອງເຈົ້າເສຍ."

24ຄືນຕໍ່ມາ ພຣະຜູ້ເປັນເຈົ້າໄດ້ພົບໂມເຊໃນທີ່ພັກກາງທາງ ແລະ ຈະຊົງຂ້າໂມເຊເສຍ.
25ແຕ່ນາງຊິບໂປຣາໄດ້ເອົາຫີນຄົມປາດໜັງປາຍອະໄວຍະວະລັບລູກຊາຍຂອງຕົນອອກ ແລ້ວ
ເອົາໄປແປະໃສ່ອະໄວຍະວະລັບຂອງໂມເຊ ນາງເວົ້າວ່າ, "ເຈົ້າເປັນຜົວແຫ່ງເລືອດ." 26ພຣະ-
ຜູ້ເປັນເຈົ້າຈຶ່ງຊົງໂຜດໃຫ້ໂມເຊມີຊີວິດຢູ່ຕໍ່ໄປ ແລະ ຝ່າຍນາງຊິບໂປຣາກໍເວົ້າວ່າ, "ເຈົ້າເປັນ
ຜົວແຫ່ງເລືອດດ້ວຍການຕັດປາຍອະໄວຍະວະລັບນັ້ນ."

27ຕໍ່ມາ ພຣະຜູ້ເປັນເຈົ້າຊົງບອກອາໂຣນວ່າ, "ຈົ່ງໄປຫາໂມເຊໃນຖິ່ນກັນດານ" ອາໂຣນຈຶ່ງ
ໄປຫາໂມເຊຢູ່ທີ່ພູຂອງພຣະເຈົ້າ ເມື່ອທັງສອງພົບກັນກໍກອດຈູບກັນ. 28ເວລານັ້ນໂມເຊໄດ້ເລົ່າ
ເລື່ອງທັງໝົດທີ່ພຣະຜູ້ເປັນເຈົ້າຊົງບອກໃຫ້ອາໂຣນຟັງ ພ້ອມທັງເລົ່າເລື່ອງການອັດສະຈັນທັງ
ປວງທີ່ພຣະອົງຊົງບອກໃຫ້ໂມເຊເຮັດ. 29ຫລັງຈາກນັ້ນໂມເຊກັບອາໂຣນໄດ້ໄປປະຊຸມຮ່ວມກັນ
ກັບບັນດາພວກເຖົ້າແກ່ຊາວອິສຣາເອນ. 30ໃນທີ່ນັ້ນອາໂຣນກໍໄດ້ເລົ່າເລື່ອງທັງໝົດທີ່ພຣະຜູ້-
ເປັນເຈົ້າຊົງບອກໂມເຊ ໃຫ້ທີ່ປະຊຸມຟັງແລະ ໂມເຊກໍເຮັດການອັດສະຈັນຕ່າງໆ ຕໍ່ໜ້າປະຊາ-
ຊົນ. 31ຝ່າຍປະຊາຊົນກໍເຊື່ອ ແລະ ເມື່ອເຂົາໄດ້ຍິນວ່າພຣະຜູ້ເປັນເຈົ້າໄດ້ສະເດັດມາຢ້ຽມຢາມ
ປະຊາຊົນ ອິສຣາເອນ ເພື່ອທອດພຣະເນດເບິ່ງຄວາມທຸກຍາກຂອງພວກເຂົາ ພວກເຂົາກໍພາ-
ກັນຂາບລົງນະມັດສະ ການພຣະອົງ.

# ບົດທີ 5

## ໂມເຊແລະອາໂຣນ ເຂົ້າເຝົ້າກະສັດຟາຣາໂອ

1ຕໍ່ມາ ໂມເຊ ກັບ ອາໂຣນ ໄດ້ພາກັນ ເຂົ້າ ເຝົ້າກະສັດ ຟາຣາໂອ ທູນວ່າ, "ພຣະຜູ້ເປັນເຈົ້າ ຂອງ
ຊາວ ອິສຣາເອນ ຊົງກ່າວວ່າ ຈົ່ງປ່ອຍໃຫ້ໄພ່ພົນຂອງເຮົາໄປ ເພື່ອເຂົາທັງຫລາຍຈະໄດ້ຈັດພິທີ
ກິນລ້ຽງຖວາຍ ເຮົາໃນຖິ່ນກັນດານ" 2ກະສັດ ຟາຣາໂອ ຈຶ່ງຊົງຖາມວ່າ, "ພຣະຜູ້ເປັນເຈົ້າ ຄືໃຜ?
ຈຳເປັນຫຍັງທີ່ໃຫ້ປ່ອຍຄົນ ອິສຣາເອນ ໄປ ເຮົາບໍ່ຮູ້ຈັກ ພຣະຜູ້ເປັນເຈົ້າ ດອກ ເຮົາຈະບໍ່ປ່ອຍໃຫ້
ຄົນ ອິສຣາເອນ ໄປເດັດຂາດ." 3ຝ່າຍ ໂມເຊ ກັບ ອາໂຣນ ກໍທູນຕໍ່ໄປວ່າ, "ພຣະເຈົ້າ ຂອງຊາວ
ເຮັບເຣີ ໄດ້ຊົງປະກົດຕໍ່ພວກຂ້ານ້ອຍ ດັ່ງນັ້ນຂໍຊົງ ໂຜດໃຫ້ພວກຂ້ານ້ອຍໄປໃນຖິ່ນກັນດານຊຶ່ງ
ເປັນໄລຍະທາງຍ່າງສາມມື້ ເພື່ອຖວາຍສັດບູຊາແດ່ ພຣະຜູ້ເປັນເຈົ້າ ຂອງພວກຂ້ານ້ອຍ ຖ້າບໍ່
ໄປ ພຣະອົງຈະຊົງລົງໂທດພວກຂ້ານ້ອຍດ້ວຍໂຣກໄພ ຫລື ເສິກສົງຄາມ." 4ກະສັດ ເອຢິບ ຊົງ
ຕອບວ່າ, "ເຫດໃດ ພວກເຈົ້າຈຶ່ງຢາກໃຫ້ປະຊາຊົນປະຖິ້ມວຽກຂອງເຂົາ ເຈົ້າຈົ່ງຄືນໄປເຮັດວຽກ
ຂອງພວກເຈົ້າດຽວນີ້!" 5ກະສັດ ຟາຣາໂອ ຊົງກ່າວຕໍ່ໄປວ່າ, "ປະຊາຊົນ ອິສຣາເອນ ກໍມີຈຳ-
ນວນຫລາຍແລ້ວໃນປະເທດນີ້ ເຈົ້າທັງສອງຢາກໃຫ້ພວກເຂົາປະວຽກການຫລື?"

6ແລ້ວໃນມື້ນັ້ນເອງ ກະສັດ ຟາຣາໂອ ຊົງສັ່ງຜູ້ຄວບຄຸມງານ ຊຶ່ງເປັນຄົນ ເອຢິບ ກັບຫົວໜ້າ
ຄົນງານ ຊຶ່ງເປັນຄົນ ອິສຣາເອນ ວ່າ, 7"ຕັ້ງແຕ່ມື້ນີ້ໄປ ພວກເຈົ້າຢ່າເອົາເຟືອງໃຫ້ຄົນ ອິສຣາ-
ເອນ ໃຊ້ເຮັດດິນຈີ່ອີກ ໃຫ້ເຂົາໄປຫາເກັບເອົາເອງ. 8ແຕ່ດິນຈີ່ນັ້ນໃຫ້ເຂົາເຮັດໄດ້ທໍ່ເກົ່າ ຢ່າໃຫ້
ຫລຸດລົງ ເພາະວ່າເຂົາເປັນຄົນຂີ້ຄ້ານ ເຂົາຈຶ່ງພາກັນໄປຮ້ອງຂໍຖວາຍສັດບູຊາແດ່ ພຣະເຈົ້າ
ຂອງເຂົາ. 9ຈົ່ງໃຫ້ເຂົາເຮັດວຽກໜັກຂຶ້ນກວ່າເກົ່າ ເພື່ອເຂົາຈະໄດ້ຫຍຸ້ງຢູ່ກັບວຽກ ແລ້ວຈະບໍ່ມີ
ເວລາຟັງຄຳຕົວະຍົວະ."

10ຫລັງຈາກນັ້ນ ຜູ້ຄວບຄຸມງານແລະ ຫົວໜ້າຄົນງານກໍອອກໄປເວົ້າກັບຄົນ ອິສຣາເອນ ວ່າ,
"ບັດນີ້ ກະສັດ ຟາຣາໂອ ຈະບໍ່ ໃຫ້ເຟືອງ ແກ່ພວກເຈົ້າອີກ. 11ໃຫ້ພວກເຈົ້າໄປຊອກຫາເອົາເອງ
ແຕ່ຈຳນວນດິນຈີ່ຕ້ອງໃຫ້ໄດ້ທໍ່ເກົ່າ." 12ດັ່ງນັ້ນ ພວກ ອິສຣາເອນ ຈຶ່ງ ແຕກກະຈັດກະຈາຍກັນໄປ
ຫາເອົາເຟືອງທົ່ວປະເທດ ເອຢິບ. 13ຝ່າຍພວກຄວບຄຸມງານກໍບີບບັງຄັບຄົນ ອິສຣາເອນ ໜັກຂຶ້ນ
ໂດຍເວົ້າວ່າ, "ແຕ່ລະມື້ ພວກເຈົ້າຕ້ອງເຮັດດິນ ຈີ່ໃຫ້ໄດ້ທໍ່ກັບຄາວທີ່ມີເຟືອງຢູ່." 14ພວກຄວບ
ຄຸມງານຂອງກະສັດ ຟາຣາໂອ ເຫລົ່ານີ້ ໄດ້ຂ້ຽນຕີຫົວໜ້າຄົນງານຂອງຊາວ ອິສຣາເອນ ພ້ອມກັບ
ຖາມວ່າ, "ເປັນຫຍັງມື້ວານນີ້ກັບມື້ນີ້ ຈຶ່ງບໍ່ໄດ້ດິນຈີ່ເຕັມຈຳນວນຄືແຕ່ກ່ອນ?"

15ແລ້ວພວກຫົວໜ້າຄົນງານຂອງ ອິສຣາເອນ ໄດ້ ເຂົ້າ ເຝົ້າກະສັດ ຟາຣາໂອ ທູນວ່າ, "ດ້ວຍ
ເຫດໃດ ພະອົງຈຶ່ງຊົງເຮັດດັ່ງນີ້ກັບພວກຂ້ານ້ອຍ. 16ຄື ພະອົງບໍ່ອະນຸຍາດໃຫ້ພວກຂ້ານ້ອຍຮັບ
ເຟືອງຄືແຕ່ກ່ອນ ແຕ່ຍັງສັ່ງໃຫ້ພວກຂ້ານ້ອຍເຮັດດິນຈີ່ຢູ່ ແລະດຽວນີ້ ຜູ້ຄວບຄຸມງານຂອງພະ
ອົງໄດ້ຂ້ຽນຕີພວກຂ້ານ້ອຍ ເລື່ອງນີ້ແມ່ນພະອົງເອງເປັນຝ່າຍຜິດ."

17ກະສັດ ຟາຣາໂອ ຊົງຕອບວ່າ, "ພວກເຈົ້າຂີ້ຄ້ານຫລາຍແທ້ໆ! ດ້ວຍເຫດນີ້ແຫລະ ພວກ
ເຈົ້າຈຶ່ງຮ້ອງຂໍຕໍ່ຂ້ອຍວ່າຢາກໄປຖວາຍສັດບູຊາແດ່ ພຣະຜູ້ເປັນເຈົ້າ. 18ພວກເຈົ້າຕ້ອງກັບໄປ
ເຮັດວຽກດຽວນີ້ ຂ້ອຍບໍ່ມີເຟືອງໃຫ້ພວກເຈົ້າດອກ ແຕ່ດິນຈີ່ນັ້ນຕ້ອງໃຫ້ໄດ້ຄົບຕາມຈຳນວນ."

[19]ເມື່ອຫົວໜ້າຄົນງານ ອິສຣາເອນ ຮູ້ວ່າ ພວກເຂົາຖືກບັງຄັບໃຫ້ເຮັດດິນຈີ່ໃຫ້ໄດ້ແຕ່ລະມື້ຄົບຕາມ
ຈຳນວນ ພວກເຂົາກໍມີຄວາມທຸກຫລາຍ.
[20]ຄັນພວກເຂົາອອກມາແຕ່ເຝົ້າກະສັດ ຟາຣາໂອ ກໍພົບເຫັນ ໂມເຊ ກັບ ອາໂຣນ ຢືນຖ້າພວກ
ເຂົາຢູ່. [21]ຈຶ່ງເວົ້າກັບ ໂມເຊ ແລະ ອາໂຣນວ່າ, "ຂໍໃຫ້ພຣະຜູ້ເປັນເຈົ້າຊົງລົງໂທດພວກທ່ານ ທີ່
ພວກທ່ານໄດ້ເຮັດໃຫ້ກະສັດຟາຣາໂອ ແລະ ຂ້າລາຊະການຂອງພະອົງຄຽດຊັງພວກຂ້າພະເຈົ້າ
ພວກທ່ານໄດ້ເຮັດເຊັ່ນນີ້ກໍເໝືອນກັບເອົາດາບໃຫ້ພວກເພິ່ນມາຂ້າພວກຂ້າພະເຈົ້າເສຍ."

## ໂມເຊອ້ອນວອນພຣະເຈົ້າ

[22]ຕໍ່ມາ ໂມເຊ ໄດ້ໄປກາບທູນຕໍ່ພຣະຜູ້ເປັນເຈົ້າອີກວ່າ, "ຂ້າແດ່ພຣະຜູ້ເປັນເຈົ້າ ເຫດໃດ
ພຣະອົງຈຶ່ງຊົງລົງໂທດປະຊາຊົນ ອິສຣາເອນ ແລະ ເຫດໃດ ພຣະອົງຈຶ່ງຊົງໃຫ້ຂ້ານ້ອຍມາ.
[23]ຄືຕັ້ງແຕ່ຂ້ານ້ອຍໄປເຂົ້າເຝົ້າກະສັດ ຟາຣາໂອ ທູນໃນພຣະນາມຂອງພຣະອົງແລ້ວ ກະສັດ
ຟາຣາໂອຍັງຊົງຂົ່ມເຫັງໄພ່ພົນຂອງພຣະອົງເລື້ອຍມາ ບໍ່ເຫັນວ່າພຣະອົງໄດ້ຊ່ອຍເຫລືອອັນໃດ
ເຂົາເລີຍ."

# ບົດທີ 6

[1]ແລ້ວພຣະຜູ້ເປັນເຈົ້າບອກ ໂມເຊວ່າ, "ບັດນີ້ ເຈົ້າຈະໄດ້ເຫັນເຫດການທີ່ເຮົາຈະເຮັດຕໍ່ກະ-
ສັດຟາຣາໂອ ຄື ເຮົາຈະບັງຄັບກະສັດຟາຣາໂອປ່ອຍຄົນ ອິສຣາເອນ ໄປຈາກ ເອຢິບ ຈະບໍ່ໃຫ້
ເພິ່ນປ່ອຍໄປທຳມະດາເທົ່ານັ້ນ ແຕ່ຈະບັງຄັບໃຫ້ເພິ່ນໄລ່ພວກເຂົາໄປໂດຍໄວ."

## ພຣະເຈົ້າຊົງເອີ້ນໂມເຊອີກ

[2-3]ພຣະເຈົ້າຊົງກ່າວກັບ ໂມເຊ ອີກວ່າ, "ເຮົາຄື ພຣະຜູ້ເປັນເຈົ້າ ເຮົາໄດ້ປະກົດໃຫ້ອັບຣາ-
ຮາມ ອີຊາກ ແລະ ຢາໂຄບ ເຫັນໃນຖານະເປັນພຣະເຈົ້າຜູ້ມີອຳນາດຍິ່ງໃຫຍ່ ແຕ່ເຮົາບໍ່ໄດ້
ສຳແດງໃຫ້ເຂົາຮູ້ວ່າຊື່ຂອງເຮົາແມ່ນ ພຣະຜູ້ເປັນເຈົ້າ. [4]ແລະ ເຮົາໄດ້ໃຫ້ຄຳໝັ້ນສັນຍາແກ່ເຂົາ
ດ້ວຍວ່າ ເຮົາຈະຍົກແຜ່ນດິນ ການາອານ ທີ່ເຂົາເຄີຍອາໄສຢູ່ຄາວເປັນຄົນຕ່າງດ້າວນັ້ນໃຫ້ແກ່
ເຂົາ. [5]ບັດນີ້ເຮົາໄດ້ຍິນສຽງຮ້ອງຄາງຂອງຊາວ ອິສຣາເອນ ຊຶ່ງຖືກຊາວ ເອຢິບ ບັງຄັບໃຫ້ເປັນ
ທາດ ແລະ ເຮົາລະນຶກເຖິງຄຳໝັ້ນສັນຍາຂອງເຮົາ. [6]ດ້ວຍເຫດນີ້ ເຮົາຈຶ່ງບອກຄົນ ອິສຣາເອນ
ວ່າ ເຮົາຄືພຣະຜູ້ເປັນເຈົ້າ ຜູ້ຈະຊ່ອຍໃຫ້ພວກເຈົ້າລອດພົ້ນຈາກຊາວ ເອຢິບ ທີ່ບັງຄັບໃຫ້ເຮັດ
ວຽກໜັກໃຫ້ພົ້ນຈາກການເປັນທາດຂອງພວກເຂົາ ເຮົາຈະໄຖ່ເອົາພວກເຈົ້າດ້ວຍແຂນອັນມີຣິດ-
ຂອງເຮົາ ແລະ ດ້ວຍການລົງໂທດພວກເຂົາຢ່າງຮຸນແຮງ. [7]ເຮົາຈະຮັບເອົາພວກເຈົ້າເປັນໄພ່
ພົນຂອງເຮົາ ແລະ ເຮົາ ຈະເປັນພຣະເຈົ້າຂອງພວກເຈົ້າ ພວກເຈົ້າຈະຮູ້ວ່າເຮົາຄືພຣະຜູ້ເປັນ-
ເຈົ້າຂອງພວກເຈົ້າ ຜູ້ຊ່ອຍພວກເຈົ້າໃຫ້ພົ້ນຈາກຊາວ ເອຢິບທີ່ບີບບັງຄັບໃຫ້ເຮັດວຽກໜັກ. [8]ເຮົາ
ຈະນຳພວກເຈົ້າເຂົ້າໄປຍັງແຜ່ນດິນທີ່ເຮົາໄດ້ປະຕິ ຍານໄວ້ ວ່າຈະຍົກໃຫ້ແກ່ອັບຣາຮາມ ແກ່
ອີຊາກ ແລະ ຢາໂຄບ ເຮົາຈະຍົກແຜ່ນດິນນັ້ນໃຫ້ເປັນກຳມະ ສິດຂອງພວກເຈົ້າ ເຮົາຄືພຣະ-
ຜູ້ເປັນເຈົ້າ."
[9]ຝ່າຍ ໂມເຊ ຈຶ່ງນຳຄວາມນັ້ນໄປບອກຊາວ ອິສຣາເອນ ແຕ່ເນື່ອງຈາກວ່າຊາວ ອິສຣາເອນ

ໄດ້ອິດເມື່ອຍ ແລະ ເບື່ອໜ່າຍໃນວຽກການອັນຫ້ຽມໂຫດ ພວກເຂົາຈຶ່ງບໍ່ເຊື່ອຟັງຄວາມເວົ້າຂອງ
ໂມເຊ. [10-11]ຕໍ່ມາ ພຣະຜູ້ເປັນເຈົ້າຊົງບອກໂມເຊອີກວ່າ, “ຈົ່ງໄປບອກໃຫ້ຟາຣາໂອກະສັດ
ຂອງ ເອຢິບ ປ່ອຍຊົນຊາດ ອິສຣາເອນ ອອກຈາກ ເອຢິບ.” [12]ແຕ່ໂມເຊກາບທູນອົງພຣະຜູ້ເປັນ-
ເຈົ້າວ່າ, “ແມ່ນແຕ່ຊາວອິສຣາເອນເອງກໍບໍ່ເຫັນເຊື່ອຟັງຂ້ານ້ອຍ ແລ້ວກະສັດຟາຣາໂອຈະເຊື່ອ
ຟັງຂ້ານ້ອຍໄດ້ແນວໃດ ເພາະຂ້ານ້ອຍເປັນຄົນເວົ້າບໍ່ເກັ່ງ.”

[13]ພຣະຜູ້ເປັນເຈົ້າຊົງສັ່ງໃຫ້ໂມເຊ ແລະ ອາໂຣນ ບອກຊາວອິສຣາເອນກັບກະສັດຟາຣາ-
ໂອວ່າ ເຂົາທັງສອງໄດ້ຮັບຄຳສັ່ງໃຫ້ນຳຊົນຊາດອິສຣາເອນອອກຈາກເອຢິບ.

## ລຳດັບເຊື້ອວົງຂອງໂມເຊ ແລະ ອາໂຣນ

[14]ຣູເບັນ ເປັນລູກຊາຍກົກຂອງຢາໂຄບ ມີລູກຊາຍສີ່ຄົນດັ່ງນີ້: ຮາໂນກ, ປານລູ, ເຮດຊະ-
ໂຣນ, ແລະ ກາມີ. ພວກເຂົາໄດ້ເປັນບັນພະບູລຸດຂອງຕະກຸນຕ່າງໆ ທີ່ສືບເຊື້ອສາຍຂອງພວກ
ເຂົາ.

[15]ຊີເມໂອນ ມີລູກຊາຍ ຫົກຄົນ ດັ່ງນີ້: ເຢມູເອນ, ຢາມິນ, ໂອຮາດ, ຢາກິນ, ໂຊຮາ ແລະ
ຊາອູນ ຜູ້ເກີດຈາກຍິງການາອານ ຊຶ່ງເປັນຕະກຸນເຜົ່າຊີເມໂອນ.

[16]ຕໍ່ໄປນີ້ ເປັນຊື່ ລູກຊາຍຂອງເລວີ ຕາມເຊື້ອສາຍຂອງເຂົາຄື: ເກໂຊນ, ໂກຮາດ, ແລະ
ເມຣາຣີ. ແລະເລວີນັ້ນ ມີອາຍຸໄດ້ ຮ້ອຍສາມສິບເຈັດປີ.

[17]ລູກຊາຍຂອງເກໂຊນ ຊື່ ລິບນີ ແລະ ຊີເມອີ ຜູ້ສືບເຊື້ອສາຍຕະກຸນຂອງເຂົາ.

[18]ໂກຮາດ ມີລູກຊາຍຊື່ວ່າ, ອຳຣາມ, ອິດຊະຮາ, ເຮັບໂຣນ, ແລະ ອຸດຊີເອນ ແລະ ເພິ່ນ
ກໍມີອາຍຸໄດ້ຮ້ອຍສາມສິບສາມປີ.

[19]ເມຣາຣີ ມີລູກຊາຍຊື່ວ່າ: ມາລີ ແລະ ມູຊີ ພວກເຫລົ່ານີ້ເປັນຕະກຸນ ເລວີ ຕາມເຊື້ອ-
ສາຍຂອງເຂົາ.

[20]ຝ່າຍ ອຳຣາມ ໄດ້ໂຢເກເບັດ ນ້ອງສາວບິດາຂອງຕົນເປັນພັນລະຍາ ແລ້ວນາງໄດ້ກຳ-
ເນີດບຸດໃຫ້ແກ່ເຂົາຊື່ວ່າ, ອາໂຣນ ແລະ ໂມເຊ, ອຳຣາມມີອາຍຸໄດ້ຮ້ອຍສາມສິບເຈັດປີ.

[21]ອິດຊະຮາ ມີລູກຊື່ ໂກຣາ, ເນເຟັກ ແລະ ຊິກຣີ.

[22]ລູກຂອງ ອຸດຊີເອນ ຊື່ ມີຊາເອນ, ເອນຊາຟັນ ແລະ ສິດຣີ.

[23]ຝ່າຍ ອາໂຣນໄດ້ນາງເອລີເຊບາ ລູກສາວຂອງອຳມີນາດາບ ນ້ອງສາວຂອງນາໂຊນ
ເປັນພັນລະຍາ ແລະມີລູກກັບເຂົາຊື່ ນາດັບ, ອາບີຮູ, ເອເລອາຊາ ແລະ ອີທາມາ.

[24]ລູກຂອງໂກຣາ ຊື່ອັດສີ, ເອນການາ ແລະ ອາບີອາສັບ ຄົນເຫລົ່ານີ້ເປັນຕົ້ນຕະກຸນຂອງ
ຄົນໂກຣາ.

[25]ຝ່າຍ ເອເລອາຊາ ບຸດຂອງອາໂຣນ ໄດ້ຮັບລູກສາວຄົນໜຶ່ງຂອງປູຕິເອນເປັນພັນລະຍາ
ນາງມີລູກກັບເຂົາຊື່ ຟີເນຮາດ

## ພຣະຜູ້ເປັນເຈົ້າຊົງສັ່ງໂມເຊ ແລະ ອາໂຣນ

[26]ແມ່ນໂມເຊກັບອາໂຣນນີ້ແຫລະ ທີ່ພຣະຜູ້ເປັນເຈົ້າຊົງບອກວ່າ ຈົ່ງພາຊາວອິສຣາເອນ
ອອກຈາກເອຢິບ ເປັນໝວດເປັນໝູ່. [27]ສອງຄົນນີ້ແຫລະ ທີ່ໄດ້ບອກກະສັດຟາຣາໂອປ່ອຍຊົນ

ຊາດ ອິສຣາເອນ ອອກຈາກ ເອຢິບ.
28ໃນມື້ທີ່ ພຣະຜູ້ເປັນເຈົ້າ ຊົງກ່າວກັບ ໂມເຊ ໃນປະເທດ ເອຢິບ ນັ້ນ. 29ພຣະອົງຊົງກ່າວວ່າ,
"ເຮົາຄື ພຣະຜູ້ເປັນເຈົ້າ ພວກເຈົ້າຈົ່ງ ເລົ່າຂໍ້ຄວາມທັງໝົດທີ່ເຮົາໄດ້ບອກແກ່ເຈົ້າໃຫ້ກະສັດ ຟາ-
ຣາໂອ ຟັງ." 30ແຕ່ ໂມເຊ ໄດ້ກາບທູນ ພຣະຜູ້ເປັນເຈົ້າ ວ່າ, "ພຣະອົງຊົງຊາບ ແລ້ວວ່າຂ້ານ້ອຍ
ເປັນຄົນເວົ້າບໍ່ເກັ່ງ ແລ້ວກະສັດ ຟາຣາໂອ ຈະເຊື່ອຟັງຂ້ານ້ອຍໄດ້ຢ່າງໃດ?"

# ບົດທີ 7

1ພຣະຜູ້ເປັນເຈົ້າ ຊົງກ່າວກັບ ໂມເຊ ວ່າ, "ເບິ່ງແມ ເຮົາຈະເຮັດໃຫ້ເຈົ້າເປັນເໝືອນ ພຣະເຈົ້າ
ຕໍ່ໜ້າ ຟາຣາໂອ ແລະ ອາໂຣນ ອ້າຍຂອງເຈົ້າ ຈະເປັນຜູ້ປະກາດພຣະທຳແກ່ກະສັດ ຟາຣາໂອ
ແທນເຈົ້າ. 2ເຈົ້າຈົ່ງບອກຂໍ້ຄວາມທັງໝົດທີ່ເຮົາສັ່ງເຈົ້ານັ້ນແກ່ ອາໂຣນ ແລ້ວ ອາໂຣນ ຈະບອກ
ໃຫ້ຟາຣາໂອ ປ່ອຍຊົນຊາດ ອິສຣາເອນ ອອກໄປຈາກປະເທດ ເອຢິບ. 3ແຕ່ເຮົາຈະເຮັດໃຫ້ກະ-
ສັດ ຟາຣາໂອ ໃຈແຂງ ເຖິງ ແມ່ນວ່າ ເຮົາຈະເຮັດການອັດສະຈັນຢ່າງຫລວງຫລາຍຊຶ່ງເປັນໝາຍ
ສຳຄັນໃນປະເທດ ເອຢິບ ແລ້ວກໍຕາມ. 4ຟາຣາໂອ ກໍຈະບໍ່ເຊື່ອຟັງເຈົ້າ ຫລັງຈາກນັ້ນ ເຮົາຈະໃຊ້
ອຳນາດບີບບັງຄັບຄົນ ເອຢິບ ແລະ ລົງໂທດຄົນ ເອຢິບ ຢ່າງໜັກ ເພື່ອນຳພາກອງທັບຂອງເຮົາ
ຄືປະຊາ ຊົນ ອິສຣາເອນ ອອກຈາກປະເທດ ເອຢິບ. 5ເມື່ອເຮົາຢຽດມືອອກຕໍ່ສູ້ຄົນ ເອຢິບ ແລະ
ນຳພາຊາວ ອິສຣາເອນ ອອກຈາກປະເທດນັ້ນແລ້ວ ຊາວ ເອຢິບ ຈຶ່ງຈະຮູ້ວ່າເຮົາຄື ພຣະຜູ້ເປັນ-
ເຈົ້າ.

6ໂມເຊ ແລະ ອາໂຣນ ກໍໄດ້ເຮັດຕາມພຣະບັນຊາຂອງ ພຣະຜູ້ເປັນເຈົ້າ. 7ເມື່ອເຂົາທັງສອງໄປ
ທູນກະສັດ ຟາຣາໂອ ນັ້ນ ໂມເຊ ມີອາຍຸແປດສິບປີ ສ່ວນ ອາໂຣນ ມີອາຍຸແປດສິບສາມປີ.

## ອາໂຣນໃຊ້ໄມ້ເທົ້າເຮັດການອັດສະຈັນ

8-9ຕໍ່ມາ ພຣະຜູ້ເປັນເຈົ້າ ຊົງກ່າວກັບ ໂມເຊ ແລະ ອາໂຣນ ວ່າ, "ຖ້າ ຟາຣາໂອ ບອກໃຫ້ພວກ
ເຈົ້າສະແດງການອັດສະ ຈັນໃຫ້ເພິ່ນເບິ່ງ ກໍໃຫ້ ໂມເຊ ບອກ ອາໂຣນ ຖິ້ມໄມ້ເທົ້າຂອງຕົນລົງຕໍ່-
ໜ້າ ຟາຣາໂອ ແລ້ວໄມ້ເທົ້ານັ້ນຈະກາຍເປັນງູ." 10ໂມເຊ ກັບ ອາໂຣນ ຈຶ່ງພາກັນເຂົ້າໄປເຝົ້າກະ-
ສັດ ຟາຣາໂອ ແລະ ເຮັດຕາມທີ່ ພຣະຜູ້ເປັນເຈົ້າ ຊົງສັ່ງໄວ້ ຄື ອາໂຣນ ໄດ້ຖິ້ມໄມ້ເທົ້ານັ້ນລົງຊ້ອງ
ພະພັກກະສັດ ຟາຣາໂອ ແລະ ບັນດາຂ້າລາຊະການຂອງພະອົງ ແລ້ວໄມ້ເທົ້ານັ້ນກໍກາຍເປັນງູ.
11ຂະນະນັ້ນກະສັດ ຟາຣາໂອ ໄດ້ຊົງ ເອີ້ນພວກນັກປາດ ແລະ ໝໍມົນຂອງພະອົງມາ ພວກເຂົາ
ເຫລົ່ານີ້ຕ່າງກໍເຮັດເຊັ່ນນັ້ນໄດ້ຄືກັນ. 12ພວກເຂົາໄດ້ຖິ້ມໄມ້ເທົ້າຂອງຕົນລົງ ໄມ້ເທົ້າເຫລົ່ານັ້ນກໍ
ກາຍເປັນງູ ແຕ່ງູຂອງ ອາໂຣນ ໄດ້ກືນກິນງູຂອງເຂົາທັງໝົດ. 13ເຖິງປານນັ້ນ ກະສັດ ຟາຣາໂອ
ກໍຍັງພະໄທແຂງຢູ່ ບໍ່ຍອມເຊື່ອຟັງ ໂມເຊ ແລະ ອາໂຣນ ເປັນຄວາມຈິງຕາມທີ່ ພຣະຜູ້ເປັນເຈົ້າ
ໄດ້ຊົງບອກໄວ້.

## ນ້ຳກາຍເປັນເລືອດ

14ຕໍ່ມາ ພຣະຜູ້ເປັນເຈົ້າ ຊົງບອກ ໂມເຊ ວ່າ, "ຟາຣາໂອ ນັ້ນດື້ດ້ານບໍ່ຍອມປ່ອຍໃຫ້ປະຊາຊົນ
ໄປ. 15ເຈົ້າຈົ່ງໄປຫາກະສັດ ຟາຣາໂອ ໃນຕອນເຊົ້າລະຫວ່າງເພິ່ນອອກໄປຍັງແມ່ນ້ຳ ນິເລ ໃຫ້

ເຈົ້າຢືນຄອຍຢູ່ແຄມ ຕາຝັ່ງ ໃຫ້ຖືໄມ້ເທົ້າທີ່ໄດ້ກາຍເປັນງູນັ້ນໄປນຳ. 16ໃຫ້ເຈົ້າເວົ້າຕໍ່ກະສັດ
ຟາຣາໂອວ່າ ພຣະຜູ້ເປັນເຈົ້າຂອງຊາວເຮັບເຣີໄດ້ໃຊ້ໃຫ້ຂ້ານ້ອຍມາ ເພື່ອບອກໃຫ້ພະອົງປ່ອຍ
ໄພ່ພົນຂອງພຣະຜູ້ເປັນເຈົ້າໄປ ເພື່ອເຂົາຈະໄດ້ຂາບໄຫວ້ບູຊາພຣະຜູ້ເປັນເຈົ້າຢູ່ໃນຖິ່ນກັນ-
ດານ ແຕ່ຈົນບັດນີ້ ພະອົງກໍຍັງບໍ່ເຊື່ອຟັງຄຳຂອງພຣະຜູ້ເປັນເຈົ້າເລີຍ. 17ພຣະຜູ້ເປັນເຈົ້າຊົງ
ກ່າວວ່າ ພະອົງຈະຮູ້ຈັກພຣະຜູ້ເປັນເຈົ້າດ້ວຍການກະທຳ ດັ່ງນີ້ ເບິ່ງເດີ້ ຂ້ານ້ອຍຈະເອົາໄມ້
ເທົ້າຟາດລົງໃນແມ່ນ້ຳນີເລ ແລ້ວພຣະເຈົ້າຈະໃຫ້ແມ່ນ້ຳນັ້ນກາຍເປັນເລືອດ. 18ປາທັງຫລາຍ
ຈະຕາຍ ນ້ຳຈະເນົ່າເໝັນ ຊາວເອຢິບ ຈະດື່ມນ້ຳນັ້ນບໍ່ໄດ້.” 19ພຣະຜູ້ເປັນເຈົ້າຊົງກ່າວກັບໂມ-
ເຊວ່າ, “ຈົ່ງບອກໃຫ້ ອາໂຣນເດ່ໄມ້ເທົ້າຂອງລາວໃສ່ແມ່ນ້ຳລຳຄອງ ໃສ່ໜອງບຶງ ແລະ ອ່າງ
ນ້ຳໃນປະເທດເອຢິບ ເພື່ອໃຫ້ນ້ຳເຫລົ່ານັ້ນກາຍເປັນເລືອດ ຕະຫລອດທົ່ວທັງແຜ່ນດິນຈະມີແຕ່
ເລືອດ ທັງທີ່ຢູ່ໃນພາຊະນະໄມ້ ແລະ ພາຊະນະຫີນ.” 20ໂມເຊກັບອາໂຣນໄດ້ເຮັດຕາມພຣະ-
ຜູ້ເປັນເຈົ້າຊົງສັ່ງ ຄືອາໂຣນໄດ້ຍົກໄມ້ເທົ້າຂຶ້ນຕີນ້ຳໃນແມ່ນ້ຳ ນີເລຊ້ອງພະພັກກະສັດຟາຣາ-
ໂອແລະ ພວກຂ້າ ລາຊະການ ແລ້ວນ້ຳໃນແມ່ນ້ຳນັ້ນກໍກາຍເປັນເລືອດທັງໝົດ. 21ຝູງປາກໍ
ຕາຍ ແມ່ນ້ຳ ກໍເນົ່າເໝັນ ຊາວເອຢິບກໍດື່ມນ້ຳນັ້ນບໍ່ໄດ້ ເພາະມີເລືອດທົ່ວປະເທດເອຢິບ.
22ຝ່າຍພວກໝໍມົນຂອງເອຢິບກໍໃຊ້ຄາຖາອາຄົມຂອງເຂົາ ເຮັດສິ່ງນັ້ນໄດ້ຄືກັນ ສະນັ້ນ ກະສັດ
ຟາຣາໂອຈຶ່ງຊົງແຂງພະໄທຢູ່ຄືເກົ່າ ພະອົງບໍ່ຍອມເຊື່ອຟັງໂມເຊແລະອາໂຣນເລີຍ ເປັນຄວາມ
ຈິງຕາມທີ່ພຣະຜູ້ເປັນເຈົ້າຊົງບອກໄວ້. 23ກະສັດຟາຣາໂອສະເດັດກັບສູ່ພະລາຊະວັງ ໂດຍບໍ່
ໄດ້ສົນພະໄທໃນເຫດການທີ່ເກີດຂຶ້ນແຕ່ຢ່າງໃດ.

24-25ຊາວເອຢິບທັງໝົດຕ່າງກໍພາກັນຂຸດນ້ຳສ້າງຕາມແຄມແມ່ນ້ຳນີເລ ເພາະວ່າພວກເຂົາ
ດື່ມນ້ຳໃນແມ່ນ້ຳນີເລບໍ່ໄດ້.

# ບົດທີ 8

## ເລື່ອງຝູງກົບ

1ຫລັງຈາກພຣະຜູ້ເປັນເຈົ້າຊົງເຮັດໃຫ້ແມ່ນ້ຳ ນີເລກາຍເປັນເລືອດຜ່ານໄປໄດ້ເຈັດມື້ແລ້ວ
ພຣະອົງກໍຊົງກ່າວກັບໂມເຊວ່າ, “ຈົ່ງໄປຫາຟາຣາໂອ ບອກວ່າ ພຣະຜູ້ເປັນເຈົ້າສັ່ງໃຫ້ປ່ອຍ
ຊົນຊາດຂອງພຣະອົງໄປບົວລະບັດພຣະອົງ. 2ຖ້າບໍ່ຍອມ ພຣະຜູ້ເປັນເຈົ້າຈະໃຫ້ຝູງກົບຂຶ້ນມາ
ລົບກວນທົ່ວປະເທດເອຢິບ. 3ແມ່ນ້ຳນີເລຈະເຕັມໄປດ້ວຍຝູງກົບ ມັນຈະຂຶ້ນມາຢູ່ໃນພະລາຊະ-
ວັງ ໃນຫ້ອງບັນທົມ ໃນແທ່ນບັນທົມ ໃນເຮືອນຂອງພວກຂ້າລາຊະການ ໃນເຮືອນປະຊາຊົນ
ໃນເຕົາອົບເຂົ້າໜົມ ແລະ ໃນອ່າງນວດແປ້ງ. 4ຝູງກົບນັ້ນຈະຂຶ້ນມາເທິງພະກາຍຂອງພະອົງ
ແລະ ຂຶ້ນເທິງຕົນຕົວຂອງປະຊາຊົນກັບຂ້າລາຊະການທັງໝົດ.”

5ຕໍ່ມາ ພຣະຜູ້ເປັນເຈົ້າຊົງບອກໂມເຊວ່າ, “ຈົ່ງບອກໃຫ້ອາໂຣນເດ່ໄມ້ເທົ້າໄປຕາມແມ່ນ້ຳລຳ
ຄອງ ແລະໜອງບຶງທັງຫລາຍ ເພື່ອໃຫ້ຝູງກົບຂຶ້ນມາເທິງປະເທດ ເອຢິບ.” 6ອາໂຣນຈຶ່ງເດ່ໄມ້-
ເທົ້າຊີ້ໄປທາງແມ່ນ້ຳທັງຫລາຍໃນປະເທດເອຢິບຝູງກົບກໍຂຶ້ນມາທົ່ວປະເທດເອຢິບ.

7ຝ່າຍພວກໝໍມົນກໍເຮັດໃຫ້ມີຝູງກົບຂຶ້ນມາເທິງແຜ່ນດິນໄດ້ຄືກັນ.

[8]ຕໍ່ມາ ກະສັດ ຟາຣາໂອ ຊົງເອີ້ນ ໂມເຊ ມາ ແລະບອກວ່າ, "ພວກເຈົ້າຈົ່ງອ້ອນວອນໃຫ້ພຣະ-
ຜູ້ເປັນເຈົ້າ ບອກຝູງກົບໄປຈາກເຮົາເສຍ ແລະ ຈາກປະຊາຊົນຂອງເຮົາ ແລ້ວເຮົາຈະປ່ອຍໃຫ້
ຄົນ ອິສຣາເອນ ໄປ ຖວາຍ ສັດບູຊາ ແດ່ ພຣະຜູ້ເປັນເຈົ້າ." [9]ໂມເຊ ໄດ້ທູນຕອບກະສັດ ຟາຣາໂອ
ວ່າ, "ສຸດແລ້ວແຕ່ພະອົງຈະກຳນົດເວລາໃຫ້ຂ້ານ້ອຍອ້ອນວອນສຳລັບພະອົງ ສຳລັບຂ້າລາຊະ-
ການ ແລະ ປະຊາຊົນຂອງພະອົງ ເພື່ອໃຫ້ຝູງກົບໜີໄປຈາກຄົນ ແລະ ຈາກບ່ອນຢູ່ອາໄສ ໃຫ້
ມັນມີແຕ່ໃນແມ່ນ້ຳ ນິເລ ເທົ່ານັ້ນ." [10]ກະສັດ ຟາຣາໂອ ຊົງຕອບວ່າ, "ໃຫ້ເຮັດໃນມື້ອື່ນນີ້" ໂມເຊ
ຈຶ່ງທູນວ່າ, "ໂດຍ ຈະເປັນໄປຕາມທີ່ພະອົງຕ້ອງການນັ້ນ ເພື່ອພະອົງຈະໄດ້ຊາບວ່າ ບໍ່ມີພະອົງ
ໃດຄືກັບ ພຣະຜູ້ເປັນເຈົ້າ ຂອງພວກຂ້ານ້ອຍ. [11]ຝູງກົບຈະໜີໄປຈາກພະອົງ ຈາກພະສຳນັກ
ຈາກຂ້າລາ ຊະການ ແລະ ຈາກປະຊາຊົນຂອງພະອົງ ຈະມີເຫລືອຢູ່ແຕ່ໃນແມ່ນ້ຳ ນິເລ ເທົ່າ
ນັ້ນ."

[12]ແລ້ວ ໂມເຊ ກັບ ອາໂຣນ ໄດ້ທູນລາກະສັດ ຟາຣາໂອ ໄປ ໂມເຊ ໄດ້ອ້ອນວອນຂໍໃຫ້ພຣະຜູ້-
ເປັນເຈົ້າ ຊົງ ເລີກໃຊ້ຝູງກົບທຳລະມານກະສັດ ເອຢິບ. [13]ພຣະຜູ້ເປັນເຈົ້າ ກໍຊົງ ເຮັດຕາມຄຳທູນຂໍ
ຂອງ ໂມເຊ ຝູງກົບທີ່ຢູ່ໃນບ້ານເຮືອນ ໃນເດີ່ນບ້ານ ແລະ ໃນທົ່ງນາຈຶ່ງໄດ້ຕາຍໝົດ. [14]ຊາວ
ເອຢິບ ໄດ້ກອງກົບຕາຍ ໄວ້ ເປັນກອງ ໃຫຍ່ ແລ້ວ ແຜ່ນດິນນັ້ນກໍ ເນົ່າ ເໝັນທົ່ວໄປ. [15]ເມື່ອກະສັດ
ຟາຣາໂອ ຊົງ ເຫັນວ່າ ຄວາມທຸກຮ້ອນນັ້ນເບົາບາງລົງແລ້ວ ກໍກັບມີພະໄທແຂງກ້າຂຶ້ນອີກ ຄືບໍ່
ຍອມເຊື່ອຟັງ ໂມເຊ ແລະ ອາໂຣນ ເປັນຄວາມຈິງຕາມທີ່ ພຣະຜູ້ເປັນເຈົ້າ ໄດ້ຊົງກ່າວໄວ້.

## ເລື່ອງຮິ້ນ ແລະ ຍຸງ

[16]ພຣະຜູ້ເປັນເຈົ້າ ຊົງບອກ ໂມເຊ ວ່າ, "ຈົ່ງບອກໃຫ້ ອາໂຣນ ຈັບໄມ້ເທົ້າຂຶ້ນມາຕີດິນ ເພື່ອໃຫ້
ຝຸ່ນດິນກາຍເປັນຮິ້ນ ແລະ ຍຸງທົ່ວປະເທດ ເອຢິບ. [17]ເຂົາທັງສອງກໍເຮັດຕາມ ອາໂຣນ ໄດ້ຈັບ
ໄມ້ເທົ້າຂຶ້ນຕີດິນ ແລ້ວຝຸ່ນດິນທັງໝົດໃນປະເທດ ເອຢິບ ໄດ້ກາຍເປັນຮິ້ນ ແລະ ຍຸງມາຕອມມະ-
ນຸດ ແລະ ສັດ. [18]ພວກໝໍມົນກໍພະຍາຍາເຮັດຢ່າງນັ້ນເໝືອນກັນ ແຕ່ພວກເຂົາເຮັດບໍ່ໄດ້.
[19]ຂະນະນັ້ນພວກໝໍມົນ ໄດ້ທູນກະສັດ ຟາຣາໂອ ວ່າ, "ສິ່ງທີ່ ເກີດຂຶ້ນນີ້ ແມ່ນການກະທຳຂອງ
ພຣະເຈົ້າ" ແຕ່ກະສັດ ຟາຣາໂອ ຊົງມີພະໄທແຂງຢູ່ຄືເກົ່າ ບໍ່ຍອມເຊື່ອຟັງ ໂມເຊ ແລະ ອາໂຣນ
ເປັນຄວາມຈິງຕາມທີ່ ພຣະຜູ້ເປັນເຈົ້າ ຊົງກ່າວໄວ້.

## ເລື່ອງເຫລືອກ

[20]ພຣະຜູ້ເປັນເຈົ້າ ຊົງບອກ ໂມເຊ ວ່າ, "ມື້ອື່ນແຕ່ເຊົ້າ ຈົ່ງໄປເຝົ້າກະສັດ ຟາຣາໂອ ຂະນະທີ່
ເພິ່ນໄປຍັງແມ່ນ້ຳ ໃຫ້ເຈົ້າບອກວ່າ ພຣະຜູ້ເປັນເຈົ້າ ຊົງສັ່ງໃຫ້ປ່ອຍຊົນຊາດຂອງພຣະອົງໄປ
ບົວລະບັດພຣະອົງ. [21]ຖ້າບໍ່ຍອມປ່ອຍໄປ ພຣະຜູ້ເປັນເຈົ້າ ຈະເຮັດໃຫ້ຝູງ ເຫລືອກມາຕອມພະ
ກາຍຂອງພະອົງ ຕອມຂ້າລາຊະການ ຕອມປະຊາຊົນ ແລະ ຕອມພະລາຊະສຳນັກຂອງພະອົງ
ຕາມບ້ານ ເຮືອນຂອງຊາວ ເອຢິບ ແລະ ຕາມພື້ນດິນຈະ ເຕັມໄປດ້ວຍ ເຫລືອກ. [22]ໃນມື້ນັ້ນ
ພຣະຜູ້ເປັນເຈົ້າ ຈະບໍ່ໃຫ້ແຄວ້ນ ໂກເຊັນ ບ່ອນປະຊາຊົນ ອິສຣາເອນອາໄສຢູ່ມີເຫລືອກ ເພື່ອພະ
ອົງຈະໄດ້ຮູ້ວ່າ ພຣະຜູ້ເປັນເຈົ້າ ຊົງກະທຳພາລະກິດຢູ່ໃນປະເທດນີ້. [23]ພຣະຜູ້ເປັນເຈົ້າ ຈະຊົງ
ແບ່ງເຂດລະຫວ່າງປະຊາຊົນ ອິສຣາເອນກັບປະຊາຊົນ ເອຢິບ ເຫດການນີ້ຈະເກີດຂຶ້ນໃນມື້ອື່ນ

ນີ້." 24ແລ້ວພຣະຜູ້ເປັນເຈົ້າໄດ້ຊົງກະທຳຢ່າງນັ້ນ ຝູງເຫລືອກອັນມະຫາສານໄດ້ເຂົ້າໄປໃນພະ-
ລາຊະວັງຂອງກະສັດ ຟາຣາໂອ ໃນເຮືອນຂ້າລາຊະການ ແລະ ທົ່ວປະເທດ ເອຢິບ ທົ່ວປະ-
ເທດ ຈຶ່ງໄດ້ຮັບການທຳລະມານທີ່ສຸດຍ້ອນຝູງເຫລືອກນັ້ນ.
25ຕໍ່ມາ ກະສັດຟາຣາໂອຊົງເອີ້ນໂມເຊກັບ ອາໂຣນເຂົ້າເຝົ້າ ແລະ ຊົງສັ່ງວ່າ, "ຈົ່ງພາກັນ
ໄປຖວາຍບູຊາແດ່ພຣະຜູ້ເປັນເຈົ້າຂອງພວກເຈົ້າໃນດິນ ແດນປະເທດນີ້." 26ໂມເຊທູນຕອບວ່າ,
"ເປັນການບໍ່ຖືກຕ້ອງທີ່ຈະເຮັດຢ່າງນັ້ນ ເພາະຖ້າຖວາຍສັດບູຊາແດ່ພຣະຜູ້ເປັນເຈົ້າຂອງພວກ
ຂ້ານ້ອຍໃຫ້ຊາວເອຢິບເຫັນ ຊຶ່ງເຂົາຖືວ່າເປັນຂອງໜ້າຂີ້ດຽດ ເຂົາກໍຈະເອົາກ້ອນຫີນຄວ່າງໃສ່
ພວກຂ້ານ້ອຍ. 27ສະນັ້ນ ພວກຂ້ານ້ອຍຈຶ່ງຈຳເປັນຕ້ອງເຂົ້າໄປຖວາຍສັດບູຊາໃນຖິ່ນກັນດານ
ຊຶ່ງເປັນໄລຍະທາງຍ່າງສາມມື້ ຕາມທີ່ພຣະຜູ້ເປັນເຈົ້າຂອງພວກຂ້ານ້ອຍຊົງສັ່ງໄວ້."
28ກະສັດຟາຣາໂອຊົງຮັບສັ່ງຕໍ່ໄປວ່າ, "ເຮົາຈະປ່ອຍໃຫ້ພວກເຈົ້າໄປຖວາຍສັດບູຊາແດ່
ພຣະຜູ້ເປັນເຈົ້າຂອງພວກເຈົ້າ ແຕ່ພວກເຈົ້າຈະຕ້ອງບໍ່ໄປໄກ ແລະ ໃຫ້ອ້ອນວອນສຳລັບເຮົາ
ດ້ວຍ."
29ໂມເຊທູນຕອບວ່າ, "ພໍຂ້ານ້ອຍທູນລາພະອົງໄປ ຂ້ານ້ອຍກໍຈະອ້ອນວອນຕໍ່ພຣະຜູ້ເປັນ-
ເຈົ້າ ຂໍໃຫ້ຝູງເຫລືອກໜີຈາກພະອົງ ຈາກຂ້າລາຊະການ ແລະ ຈາກປະຊາຊົນຂອງພະອົງໃນ
ມື້ອື່ນນີ້ ແຕ່ພະອົງຢ່າໄດ້ຫລອກລວງພວກຂ້ານ້ອຍຕໍ່ໄປອີກ ຄືຢ່າຂັດຂວາງປະຊາຊົນ ອິສຣາ-
ເອນໃນການຖວາຍສັດບູຊາແດ່ພຣະຜູ້ເປັນເຈົ້າ." 30ແລ້ວໂມເຊໄດ້ທູນລາກະສັດຟາຣາໂອໄປ
ອ້ອນວອນຕໍ່ພຣະຜູ້ເປັນເຈົ້າ. 31ພຣະຜູ້ເປັນເຈົ້າຊົງເຮັດຕາມຄຳທູນຂໍຂອງໂມເຊຄືໄດ້ຊົງເຮັດ
ໃຫ້ຝູງເຫລືອກໜີໄປເສຍຈາກກະສັດ ຟາຣາໂອ ຈາກຂ້າລາຊະການ ແລະ ຈາກປະຊາຊົນ
ຂອງພະອົງ ບໍ່ໃຫ້ເຫລືອກເຫລືອຢູ່ຈັກໂຕເລີຍ. 32ແຕ່ແລ້ວກະສັດຟາຣາໂອກໍຍັງມີພະໄທແຂງຢູ່
ຄືເກົ່າ ໂດຍບໍ່ຍອມປ່ອຍໃຫ້ປະຊາຊົນອິສຣາເອນໄປ.

# ບົດທີ 9

## ເລື່ອງສັດທັງຫລາຍຕາຍ

1ພຣະຜູ້ເປັນເຈົ້າຊົງບອກໂມເຊວ່າ, "ຈົ່ງໄປຫາ ຟາຣາໂອແລ້ວເວົ້າວ່າ ພຣະຜູ້ເປັນເຈົ້າ
ຂອງຊາວເຮັບເຣີ ຊົງສັ່ງໃຫ້ປ່ອຍໄພ່ພົນຂອງພຣະອົງໄປນົບລະບັດພຣະອົງ. 2-3ຖ້າບໍ່ຍອມ
ປ່ອຍໄປ ຍັງຖ່ວງດຶງເຂົາໄວ້ອີກ ພຣະຜູ້ເປັນເຈົ້າຈະໃຫ້ເກີດໂຣກລະບາດຢ່າງຮ້າຍແຮງແກ່ຝູງ
ສັດຊາວເອຢິບຄືແກ່ຝູງມ້າ ຝູງລໍ ຝູງອູດ ຝູງງົວ ຝູງຄວາຍແລະ ຝູງແກະແບ້. 4ພຣະຜູ້ເປັນ-
ເຈົ້າຈະເຮັດໃຫ້ຝູງສັດຊາວເອຢິບຕາຍແລະ ຈິບຫາຍໄປ ແຕ່ຈະໃຫ້ຝູງສັດອິສຣາເອນມີຊີ ວິດ
ຢູ່.
5-6ພຣະຜູ້ເປັນເຈົ້າຊົງກຳນົດວ່າ ຈະໃຫ້ສິ່ງນີ້ເກີດຂຶ້ນໃນມື້ອື່ນນີ້" ຄັນມື້ອື່ນມາ ພຣະຜູ້ເປັນ-
ເຈົ້າກໍຊົງກະທຳຕາມທີ່ຊົງກ່າວໄວ້ຄືໄດ້ຊົງເຮັດໃຫ້ສັດທັງປວງຂອງເອຢິບຕາຍ ແຕ່ສັດຂອງອິ-
ສຣາເອນບໍ່ຕາຍຈັກໂຕ. 7ກະສັດຟາຣາໂອຈຶ່ງຊົງໃຊ້ຄົນໄປເບິ່ງ ແລ້ວກໍຊົງຊາບວ່າ ສັດຂອງ
ຊາວອິສຣາເອນບໍ່ໄດ້ຕາຍເລີຍ ເມື່ອຊົງຊາບດັ່ງນີ້ກໍຊົງມີພະໄທແຂງຢູ່ຄືເກົ່າ ໂດຍບໍ່ຍອມປ່ອຍ

ໃຫ້ປະຊາຊົນ ອິສຣາເອນ ໄປ.

## ເລື່ອງຝີ

[8]ພຣະຜູ້ເປັນເຈົ້າ ຊົງກ່າວກັບ ໂມເຊ ແລະ ອາໂຣນ ວ່າ, "ພວກເຈົ້າຈົ່ງກຳເອົາຂີ້ເຖົ່າໄຟເຕັມ
ກຳມືແລ້ວໃຫ້ ໂມເຊ ຫວ່ານຂຶ້ນໄປເທິງອາກາດຕໍ່ໜ້າ ຟາຣາໂອ. [9]ຂີ້ເຖົ່າໄຟນັ້ນຈະກາຍເປັນຝຸ່ນ
ດິນປິວໄປທົ່ວປະເທດ ເອຢິບ ຈະຕົກຖືກມະນຸດ ແລະ ສັດເດຍລະສານ ແລ້ວຈະເກີດເປັນຝີ
ແຕກເປັນບາດໃນຕົນຕົວ." [10]ດັ່ງນັ້ນ ໂມເຊ ກັບ ອາໂຣນ ຈຶ່ງກຳເອົາຂີ້ເຖົ່າໄຟຢືນຢູ່ຊ້ອງໜ້າກະສັດ
ຟາຣາໂອ ແລ້ວ ໂມເຊ ໄດ້ຫວ່ານຂຶ້ນໄປເທິງອາກາດ ຂີ້ເຖົ່າໄຟນັ້ນກໍປິວໄປຕົກຖືກມະນຸດແລະ
ສັດເດຍລະສານ ເປັນເຫດໃຫ້ມະນຸດ ແລະ ສັດເກີດເປັນຝີແຕກເປັນບາດໃນຕົນຕົວ.
[11]ພວກໝໍມົນຊາວ ເອຢິບ ບໍ່ສາມາດຈະເຮັດແຂ່ງກັບ ໂມເຊ ໄດ້ ເພາະວ່າຝີນັ້ນໄດ້ເກີດກັບເຂົາ
ເອງ ເໝືອນຊາວ ເອຢິບ ທັງປວງ. [12]ແຕ່ ພຣະຜູ້ເປັນເຈົ້າ ໄດ້ຊົງເຮັດໃຫ້ກະສັດ ຟາຣາໂອ ມີພະໄທ
ແຂງຢູ່ ໂດຍບໍ່ຍອມປ່ອຍໃຫ້ຄົນ ອິສຣາເອນ ໄປ ເປັນຄວາມຈິງຕາມທີ່ພຣະອົງຊົງບອກໄວ້ກັບ
ໂມເຊ ນັ້ນ.

## ເລື່ອງໝາກເຫັບ

[13]ຕໍ່ມາ ພຣະຜູ້ເປັນເຈົ້າ ຊົງບອກ ໂມເຊ ວ່າ, "ຈົ່ງໄປເຝົ້າກະສັດ ຟາຣາໂອ ແຕ່ເຊົ້າ ທູນວ່າ
ພຣະຜູ້ເປັນເຈົ້າ ຂອງ ຊາວ ເຮັບເຣີ ຊົງ ສັ່ງ ໃຫ້ປ່ອຍ ໄພ່ພົນ ຂອງ ພຣະອົງ ໄປ ບົວລະບັດ ພຣະອົງ.
[14]ດ້ວຍວ່າຄາວນີ້ ພຣະຜູ້ເປັນເຈົ້າ ຈະລົງໂທດພະອົງ ກັບຂ້າລາຊະການ ແລະ ປະຊາຊົນ ເອ-
ຢິບ ເພື່ອໃຫ້ພະອົງຊົງຊາບວ່າ ທົ່ວໂລກນີ້ ຈະບໍ່ມີໃຜສະເໝີເໝືອນ ພຣະຜູ້ເປັນເຈົ້າ ໄດ້. [15]ຖ້າ
ພຣະຜູ້ເປັນເຈົ້າ ຊົງທຳລາຍພະອົງກັບປະຊາຊົນ ເອຢິບ ດ້ວຍພະຍາດ ພະອົງກໍຈະຖືກທຳລາຍ
ຈົນໝົດຊິ້ນ. [16]ແຕ່ທີ່ ພຣະຜູ້ເປັນເຈົ້າ ຊົງ ໃຫ້ພະອົງຊີວິດຢູ່ນີ້ ກໍເພື່ອຈະໃຫ້ເຫັນອຳນາດຂອງ
ພຣະຜູ້ເປັນເຈົ້າ ເພື່ອວ່າ ຊື່ສຽງຂອງ ພຣະຜູ້ເປັນເຈົ້າ ຈະໄດ້ແຜ່ຜາຍໄປທົ່ວໂລກ. [17]ດຽວນີ້ ພະ
ອົງຍັງແຂງພະໄທບໍ່ຍອມປ່ອຍໃຫ້ປະຊາຊົນ ອິສຣາເອນ ໄປ. [18]ດັ່ງນັ້ນ ມື້ອື່ນປະມານເວລານີ້
ພຣະຜູ້ເປັນເຈົ້າ ຈະເຮັດໃຫ້ໝາກເຫັບໃຫຍ່ ຕົກລົງມາຢ່າງໜັກ ຢ່າງທີ່ບໍ່ເຄີຍມີຈັກເທື່ອຕັ້ງແຕ່
ເປັນປະເທດ ເອຢິບ ມາ. [19]ບັດນີ້ ຈົ່ງຕ້ອນຝູງສັດກັບບັນດາສິ່ງທີ່ມີຢູ່ໃນກາງແຈ້ງເຂົ້າບ່ອນກຳບັງ
ເພາະຄົນທຸກຄົນ ແລະ ສັດທຸກໂຕທີ່ຢູ່ໃນກາງແຈ້ງ ຈະຖືກໝາກເຫັບໃຫຍ່ຕົກໃສ່ຕາຍໝົດ."
[20]ເມື່ອໄດ້ຍິນດັ່ງນັ້ນ ພວກຂ້າລາຊະການຂອງກະສັດ ຟາຣາໂອກໍເຊື່ອຟັງ ແລະ ຢຳເກງ
ຖ້ອຍຄຳຂອງ ພຣະຜູ້ເປັນເຈົ້າ ພວກເຂົາຈຶ່ງນຳພວກທາດກັບຝູງສັດຂອງຕົນ ເຂົ້າບ່ອນກຳບັງ.
[21]ແຕ່ພວກທີ່ບໍ່ສົນໃຈໃນຖ້ອຍຄຳຂອງ ພຣະຜູ້ເປັນເຈົ້າ ກໍປະປ່ອຍໃຫ້ພວກທາດ ແລະ ຝູງສັດ
ຂອງຕົນຢູ່ໃນກາງ ແຈ້ງ.
[22]ຕໍ່ມາ ພຣະຜູ້ເປັນເຈົ້າ ຊົງບອກ ໂມເຊ ວ່າ, "ຈົ່ງຍົກມືຂຶ້ນ ເທິງທ້ອງຟ້າ ເພື່ອໃຫ້ໝາກເຫັບ
ໃຫຍ່ຕົກລົງມາຖືກຄົນ ຖືກສັດ ແລະ ພືດພັນຕ່າງໆໃນກາງແຈ້ງທົ່ວປະເທດ ເອຢິບ." [23]ໂມເຊ
ຈຶ່ງຍົກໄມ້ເທົ້າຂຶ້ນເທິງຟ້າ ແລ້ວ ພຣະຜູ້ເປັນເຈົ້າ ໄດ້ຊົງໃຫ້ມີຟ້າຮ້ອງ ມີຟ້າແມບເຫລື້ອມ ແລະ
ມີໝາກ ເຫັບຕົກລົງມາເທິງປະເທດ ເອຢິບ. [24]ພະຍຸຝົນ ຟ້າແມບເຫລື້ອມ ແລະ ໝາກເຫັບໃຫຍ່
ໄດ້ຕົກລົງມາຢ່າງໜັກ ຢ່າງທີ່ບໍ່ເຄີຍມີຈັກເທື່ອຕັ້ງແຕ່ເປັນຊາດ ເອຢິບ. [25]ສິ່ງສາລະພັດທັງຄົນ

ແລະ ສັດທີ່ຢູ່ໃນກາງແຈ້ງທົ່ວປະ ເທດເອຢິບ ໄດ້ຖືກໝາກເຫັບໃຫຍ່ຕົກລົງມາທຳລາຍຈົນຫາຍ
ໝົດ ຜັກຫຍ້າ ແລະ ຕົ້ນໄມ້ກໍເສຍຫາຍທັກລົ້ມໝົດ. [26]ມີແຕ່ແຄວັນໂກເຊັນບ່ອນຊາວອິສຣາ-
ເອນອາໄສຢູ່ເທົ່ານັ້ນ ທີ່ໝາກເຫັບບໍ່ໄດ້ຕົກລົງໃສ່.
[27]ໃນເທື່ອນີ້ ກະສັດຟາຣາໂອຊົງໃຊ້ຄົນໄປເອີ້ນໂມເຊແລະອາໂຣນມາເຝົ້າ ຊົງກ່າວວ່າ,
"ເຮົາໄດ້ເຮັດບາບແລ້ວ ໃນຄາວນີ້ ພຣະຜູ້ເປັນເຈົ້າເປັນຝ່າຍຖືກ. [28]ຂໍໃຫ້ເຈົ້າອ້ອນວອນຂໍນຳ
ພຣະຜູ້ເປັນເຈົ້າ ເລື່ອງໝາກ ເຫັບ ແລະ ຟ້າຮ້ອງນີ້ ເພາະເຮົາທົນບໍ່ໄຫວແລ້ວ ບັດນີ້ເຮົາຈະ
ປ່ອຍໃຫ້ພວກເຈົ້າໄປໂດຍບໍ່ຕ້ອງລັງເລຕໍ່ໄປອີກ. "
[29]ໂມເຊໄດ້ທູນຕອບວ່າ, "ພໍຂ້ານ້ອຍອອກໄປຈາກເມືອງນີ້ ຂ້ານ້ອຍຈະຍົກມືຂຶ້ນອ້ອນວອນ
ພຣະຜູ້ເປັນເຈົ້າ ແລ້ວສຽງຟ້າຮ້ອງກໍຈະເຊົາ ແລະ ໝາກເຫັບກໍຈະບໍ່ຕົກລົງມາອີກ ເພື່ອພະອົງ
ຈະໄດ້ຮູ້ວ່າ ໂລກນີ້ເປັນຂອງພຣະຜູ້ເປັນເຈົ້າ. [30]ແຕ່ຂ້ານ້ອຍຮູ້ຢູ່ແລ້ວວ່າ ພະອົງກັບພວກຂ້າ-
ລາຊະການຂອງພະອົງຈະຍັງບໍ່ຢຳເກງພຣະຜູ້ເປັນເຈົ້າ."
[31]ຕົ້ນປ່ານກັບເຂົ້າເດືອຍກໍຖືກທຳລາຍໝົດ ເພາະໃນເວລານັ້ນເຂົ້າເດືອຍກຳລັງມີຮວງ.
[32]ແລະ ຕົ້ນປ່ານກໍອອກດອກແລ້ວ ແຕ່ເຂົ້າບາເລກັບເຂົ້າ ຝ້າງນັ້ນບໍ່ໄດ້ຖືກທຳລາຍ ເພາະວ່າ
ມັນຍັງບໍ່ທັນຂຶ້ນມາພົ້ນດິນ.
[33]ເມື່ອໂມເຊທູນລາກະສັດຟາຣາໂອອອກຈາກເມືອງໄປ ໂມເຊກໍຍົກຂຶ້ນມືອ້ອນວອນພຣະຜູ້-
ເປັນເຈົ້າ ແລ້ວສຽງຟ້າຮ້ອງກໍເຊົາ ໝາກເຫັບ ແລະ ຝົນກໍເຊົາຕົກ. [34]ເມື່ອຊົງເຫັນວ່າຝົນກັບ
ໝາກເຫັບ ແລະ ຟ້າຮ້ອງເຊົາແລ້ວ ຝ່າຍກະສັດຟາຣາໂອກັບຂ້າລາຊະການຂອງພະອົງ ກໍຊົງ
ປຸ່ງນພະໄທເຮັດຜິດຕໍ່ໄປອີກ. [35]ຄືບໍ່ຍອມປ່ອຍໃຫ້ຊາວອິສຣາເອນໄປ ເປັນຄວາມຈິງຕາມທີ່
ພຣະຜູ້ເປັນເຈົ້າຊົງບອກໂມເຊໄວ້.

# ບົດທີ 10

## ເລື່ອງຕັກແຕນ

[1]ພຣະຜູ້ເປັນເຈົ້າຊົງບອກໂມເຊວ່າ, "ຈົ່ງໄປຫາ ຟາຣາໂອ ເຮົາໄດ້ເຮັດໃຫ້ຟາຣາໂອກັບຂ້າ
ລາຊະ ການມີໃຈແຂງກະດ້າງ ເພື່ອເຮົາຈະໄດ້ເຮັດການອັດສະ ຈັນເຫລົ່ານີ້ໃນທ່າມກາງພວກ
ເຂົາ. [2]ເພື່ອເຈົ້າຈະໄດ້ເລົ່າເລື່ອງການອັດສະຈັນທີ່ເຮົາໄດ້ເຮັດໃຫ້ຄົນເອຢິບ ເສຍໜ້າເສຍຕາ ສູ່
ລູກຫລານຟັງ ແລະເພື່ອເຈົ້າທັງຫລາຍຈະໄດ້ຮູ້ວ່າ ເຮົາຄືພຣະຜູ້ເປັນເຈົ້າ."
[3]ໂມເຊກັບອາໂຣນຈຶ່ງເຂົ້າເຝົ້າກະສັດ ຟາຣາໂອທູນວ່າ, "ພຣະຜູ້ເປັນເຈົ້າຂອງຊາວ ເຮັບ-
ເຣີຊົງກ່າວວ່າ ພະອົງຈະຊົງຂັດຂືນ ບໍ່ຍອມອ່ອນນ້ອມຕໍ່ພຣະຜູ້ເປັນເຈົ້າຢູ່ອີກເທິງປານໃດ ຈົ່ງ
ປ່ອຍໃຫ້ຊົນຊາດອິສຣາເອນໄປບົວລະບັດພຣະຜູ້ເປັນເຈົ້າເສຍ. [4]ຖ້າພະອົງຍັງປະຕິເສດ ບໍ່
ຍອມປ່ອຍໄປ ເບິ່ງເດີ້ ມື້ອື່ນນີ້ພຣະຜູ້ເປັນເຈົ້າຈະໃຫ້ຕັກແຕນເຂົ້າມາໃນປະເທດຂອງພະອົງ
ຝູງຕັກແຕນຈະປົກຄຸມຢູ່ທົ່ວໄປຈົນບໍ່ເຫັນດິນ. [5]ຝູງຕັກແຕນຈະປົກຄຸມຢູ່ທົ່ວໄປຈົນບໍ່ເຫັນດິນ.
ມັນຈະກິນທຸກສິ່ງທີ່ເຫລືອຈາກໝາກເຫັບທຳລາຍ ຕົ້ນໄມ້ທຸກຕົ້ນຂອງພະອົງ ມັນຈະກິນໝົດ.
[6]ມັນຈະເຂົ້າໄປຢູ່ໃນພະລາຊະວັງ ໃນເຮືອນຂອງຂ້າລາຊະການ ແລະ ໃນເຮືອນຂອງຄົນເອຢິບ

ມັນຈະໂຫດ ຮ້າຍກວ່າທຸກຢ່າງ ທີ່ບັນພະບູລຸດຂອງພະອົງເຄີຍປະສົບມາຕັ້ງແຕ່ຢູ່ໃນປະເທດນີ້”
ແລ້ວໂມເຊກໍທູນລາກະສັດ ຟາຣາໂອໄປ.
7ຕໍ່ມາ ພວກຂ້າລາຊະການໄດ້ທູນກະສັດຟາຣາໂອ ວ່າ, “ບຸກຄົນຜູ້ນີ້ຍັງຈະເຮັດໃຫ້ພວກເຮົາ
ເດືອດຮ້ອນຢູ່ເຖິງປານໃດ ຂໍພະອົງຊົງພະກະລຸນາໂຜດປ່ອຍຄົນເຫລົ່ານີ້ໄປບົວລະບັດພຣະຜູ້-
ເປັນເຈົ້າຂອງເຂົາເສຍ ພະອົງຍັງບໍ່ເຫັນບໍວ່າ ເອຢິບໄດ້ຈິບຫາຍແລ້ວ?”
8ດັ່ງນັ້ນ ໂມເຊກັບອາໂຣນຈຶ່ງຖືກນຳເຂົ້າເຝົ້າກະສັດຟາຣາໂອອີກ ໃນເທື່ອນີ້ກະສັດຟາຣາ-
ໂອ ຊົງກ່າວວ່າ, “ຈົ່ງໄປບົວລະບັດພຣະຜູ້ເປັນເຈົ້າຂອງເຈົ້າເສຍ ແຕ່ໃຜແດ່ຈະໄປ?” 9ໂມເຊ
ທູນຕອບວ່າ, “ພວກຂ້ານ້ອຍຈະໄປກັນໝົດ ທັງຄົນໜຸ່ມຄົນແກ່ ທັງລູກຊາຍຍິງ ທັງຝູງແກະຝູງ
ແບ້ ທັງງົວທັງຄວາຍ ເພາະພວກຂ້ານ້ອຍຈະຈັດໃຫ້ມີພິທີລ້ຽງທາງສາດສະໜາຖວາຍບູຊາແດ່
ພຣະຜູ້ເປັນເຈົ້າ.”
10ກະສັດຟາຣາໂອຊົງກ່າວຕອບວ່າ, “ໃຫ້ພຣະຜູ້ເປັນເຈົ້າຊ່ອຍເຈົ້າສາ ຝ່າຍເຮົາຈະບໍ່ອະນຸ-
ຍາດໃຫ້ພວກຜູ້ຍິງ ແລະ ເດັກນ້ອຍໄປດອກ ມັນເປັນຄວາມຈິງແລ້ວວ່າພວກເຈົ້າມີແຜນການ
ຮ້າຍ. 11ອະນຸຍາດບໍ່ໄດ້ດອກ ຖ້າພວກເຈົ້າຢາກນະມັດສະການພຣະຜູ້ເປັນເຈົ້າແທ້ ໃຫ້ພາແຕ່
ພວກຜູ້ຊາຍໄປ” ແລ້ວ ໂມເຊກັບອາໂຣນກໍຖືກໄລ່ໜີຈາກພະພັກກະສັດ ຟາຣາໂອ.
12ຕໍ່ມາ ພຣະຜູ້ເປັນເຈົ້າຊົງບອກໂມເຊວ່າ, “ຈົ່ງຍົກມືຂຶ້ນເໜືອປະເທດເອຢິບ ເພື່ອໃຫ້ຝູງ
ຕັກແຕນມາທຳ ລາຍທຸກສິ່ງທີ່ເກີດຂຶ້ນໃນແຜ່ນດິນ ແລະ ທຳລາຍທຸກສິ່ງທີ່ເຫລືອຈາກໝາກ-
ເຫັບນັ້ນ.” 13ດັ່ງນັ້ນ ໂມເຊຈຶ່ງຍົກໄມ້ເທົ້າຂຶ້ນ ແລ້ວພຣະຜູ້ເປັນເຈົ້າຊົງໃຫ້ລົມຕາເວັນອອກພັດ
ມາຍັງປະເທດທັງກາງເວັນແລະ ກາງຄືນ ຄັນເວລາເຊົ້າ ລົມຕາເວັນອອກກໍພັດເອົາຝູງຕັກແຕນ
ມາ. 14ຝູງຕັກແຕນນັ້ນໄດ້ເຂົ້າມາເຕັມປະເທດເອຢິບ ຊຶ່ງແຕ່ກ່ອນ ຫລື ຫລັງຈາກນັ້ນມາກໍບໍ່
ເຄີຍມີຝູງຕັກແຕນຫລວງ ຫລາຍຢ່າງນີ້ຈັກເທື່ອ. 15ຝູງຕັກແຕນນີ້ໄດ້ປົກຫຸ້ມພື້ນດິນຈົນດຳມືດ
ມັນໄດ້ກິນຜັກ ຫຍ້າ ແລະ ໝາກໄມ້ທຸກຢ່າງທີ່ເຫລືອຈາກໝາກ ເຫັບຕົກໃສ່ ຕະຫລອດທົ່ວ
ປະເທດເອຢິບບໍ່ມີພືດພັນຫລື ຕົ້ນໄມ້ໃບຂຽວເຫລືອຢູ່ເລີຍ.
16ຂະນະນັ້ນ ກະສັດຟາຣາໂອກໍຟ້າວໃຫ້ຄົນໄປເອົາ ໂມເຊກັບອາໂຣນເຂົ້າມາເຝົ້າ ຊົງບອກ
ວ່າ, “ເຮົາໄດ້ເຮັດບາບຕໍ່ສູ້ພຣະຜູ້ເປັນເຈົ້າຂອງເຈົ້າ ແລະ ຕໍ່ສູ້ເຈົ້າທັງຫລາຍດ້ວຍ. 17ບັດນີ້ ຂໍ
ເຈົ້າຈົ່ງໃຫ້ອະໄພໂທດແກ່ເຮົາແຕ່ເທື່ອນີ້ເທື່ອດຽວ ຈົ່ງອ້ອນວອນຂໍໃຫ້ພຣະຜູ້ເປັນເຈົ້າຂອງເຈົ້າ
ຍົກ ໂທດອັນຈະນຳໄປສູ່ຄວາມຕາຍນີ້ອອກຈາກເຮົາດ້ວຍ.” 18ແລ້ວໂມເຊໄດ້ທູນລາກະສັດຟາ-
ຣາໂອໄປອ້ອນວອນພຣະຜູ້ເປັນເຈົ້າ. 19ພຣະຜູ້ເປັນເຈົ້າຈຶ່ງຊົງໃຫ້ລົມແດງພັດໄປທາງທິດຕາ-
ເວັນ ຕົກ ລົມນັ້ນໄດ້ພັດເອົາຝູງຕັກແຕນໄປຕົກລົງໃນທະເລແດງ ຈົນບໍ່ມີຕັກແຕນຈັກໂຕເຫລືອ
ຢູ່ໃນປະເທດ ເອຢິບ. 20ແຕ່ພຣະຜູ້ເປັນເຈົ້າໄດ້ຊົງເຮັດໃຫ້ກະສັດຟາຣາໂອມີຈິດໃຈແຂງກະ-
ດ້າງຢູ່ຄືເກົ່າ ໂດຍບໍ່ຊົງຍອມປ່ອຍໃຫ້ຊາວອິສຣາເອນໄປອີກ.

## ເລື່ອງຄວາມມືດ

21ຕໍ່ມາ ພຣະຜູ້ເປັນເຈົ້າບອກໂມເຊວ່າ, “ຈົ່ງຍົກມືຂອງເຈົ້າຂຶ້ນເທິງທ້ອງຟ້າ ເພື່ອໃຫ້ເກີດ
ຄວາມມືດອັນໜາຕຶບຈົນຈັບບາຍອັນໃດບໍ່ໄດ້ໃນແຜ່ນດິນເອຢິບ.”

22ໂມເຊ ຈຶ່ງຍົກມືຂຶ້ນສູ່ທ້ອງຟ້າ ແລ້ວຄວາມມືດອັນໜາຕຶບກໍເກີດຂຶ້ນທົ່ວແຜ່ນດິນ ເອຢິບ ຕະ-
ຫລອດສາມມື້. 23ຄົນ ເອຢິບ ຫລຽວເບິ່ງກັນບໍ່ເຫັນ ແລະ ບໍ່ມີໃຜໜີໄປຈາກເຮືອນຂອງຕົນເປັນ
ເວລາສາມມື້ ແຕ່ໃນບ່ອນຢູ່ຂອງຊາວ ອິສຣາເອນ ໄດ້ມີແສງສະຫວ່າງໃຫ້ເຂົາເຫັນຮຸ່ງໄດ້.
24ກະສັດ ຟາຣາໂອ ຈຶ່ງຊົງສັ່ງໃຫ້ ໂມເຊ ເຂົ້າມາເຝົ້າ ຊົງກ່າວວ່າ, "ພວກເຈົ້າຈົ່ງໄປບົວລະບັດ
ພຣະຜູ້ເປັນເຈົ້າ ເສຍ ພວກຜູ້ຍິງ ແລະ ເດັກນ້ອຍກໍໄປກັບພວກເຈົ້າໄດ້ ແຕ່ຝູງແກະແບ້ ແລະ
ງົວຄວາຍໃຫ້ຢູ່ທີ່ນີ້."
25ໂມເຊ ຈຶ່ງທູນຕອບວ່າ, "ຕ້ອງໂຜດໃຫ້ມີຝູງສັດໄປນຳ ເພື່ອພວກຂ້ານ້ອຍຈະໄດ້ເຜົາບູຊາ
ແດ່ ພຣະຜູ້ເປັນເຈົ້າ ຂອງພວກຂ້ານ້ອຍ. 26ຝູງສັດຂອງພວກຂ້ານ້ອຍຈະຕ້ອງເອົາໄປນຳ ບໍ່ໃຫ້
ເຫລືອຄ້າງຢູ່ຈັກໂຕ ເພາະວ່າຈະຕ້ອງເລືອກເອົາສັດເຫລົ່ານັ້ນ ເຜົາຖວາຍບູຊາແດ່ ພຣະຜູ້ເປັນ-
ເຈົ້າ ພວກຂ້ານ້ອຍຍັງບໍ່ຮູ້ຈັກວ່າຈະຕ້ອງເອົາສັດໂຕໃດ ຖວາຍບູຊາແດ່ ພຣະຜູ້ເປັນເຈົ້າ ຈົນ
ກວ່າພວກຂ້ານ້ອຍຈະໄປເຖິງທີ່ນັ້ນເສຍກ່ອນ."
27ພຣະຜູ້ເປັນເຈົ້າ ຊົງ ເຮັດ ໃຫ້ກະສັດ ຟາຣາໂອ ມີພະ ໄທ ແຂງກະດ້າງຢູ່ຄືເກົ່າ ໂດຍບໍ່ຍອມ
ປ່ອຍໃຫ້ຊົນຊາດ ອິສຣາເອນ ໄປ. 28ກະສັດ ຟາຣາໂອ ຊົງຮ້າຍ ໂມເຊ ໂດຍເວົ້າວ່າ, "ຈົ່ງ ອອກ
ໜີຈາກເຮົາ! ລະວັງໃຫ້ດີ ຢ່າມາເບິ່ງໜ້າກູອີກ ເພາະຖ້າມຶງເບິ່ງໜ້າກູໃນມື້ໃດ ມຶງຈະຕ້ອງຕາຍ
ໃນມື້ນັ້ນ." 29ໂມເຊ ກໍທູນຕອບວ່າ, "ພະອົງຊົງເວົ້າຖືກຕ້ອງແລ້ວ ຂ້ານ້ອຍຈະບໍ່ກັບມາໃຫ້ພະອົງ
ເຫັນໜ້າອີກຈັກເທື່ອ."

# ບົດທີ 11

## ໂມເຊເວົ້າເຖິງຄວາມຕາຍຂອງລູກກົກຊາວເອຢິບ

1ພຣະຜູ້ເປັນເຈົ້າ ຊົງບອກ ໂມເຊ ວ່າ, "ເຮົາຈະນຳໄພວິບັດອີກຢ່າງໜຶ່ງມາລົງ ໂທດກະສັດ ຟາ-
ຣາໂອ ແລະ ຄົນ ເອຢິບ ຫລັງຈາກນັ້ນເຂົາຈະປ່ອຍພວກເຈົ້າໄປ ໃນເທື່ອນີ້ເຂົາຈະໄລ່ພວກເຈົ້າ
ໄປໝົດ. 2ບັດນີ້ ເຈົ້າຈົ່ງໃຫ້ຄົນ ອິສຣາເອນ ທັງໝົດ ທັງຜູ້ຊາຍແລະ ຜູ້ຍິງ ຂໍເອົາເຄື່ອງເງິນ
ເຄື່ອງຄຳຈາກເພື່ອນບ້ານຂອງເຂົາ."
3ພຣະຜູ້ເປັນເຈົ້າ ໄດ້ຊົງເຮັດໃຫ້ຄົນ ເອຢິບ ຢຳເກງຄົນ ອິສຣາເອນ ແລະ ຍັງຊົງເຮັດໃຫ້ ໂມເຊ
ໄດ້ຮັບຄວາມນັບຖືຈາກຂ້າລາຊະການ ແລະ ຊາວ ເອຢິບ ທັງປວງດ້ວຍ.
4ໂມເຊ ໄດ້ທູນກະສັດ ຟາຣາໂອ ວ່າ, "ພຣະຜູ້ເປັນເຈົ້າ ຊົງບອກວ່າ ໃນເວລາປະມານທ່ຽງຄືນ
ພຣະອົງຈະສະເດັດໄປໃນທ່າມກາງຊາວ ເອຢິບ ໃນເວລານັ້ນ ລູກຊາຍກົກທັງໝົດໃນປະເທດ
ເອຢິບ. 5ໃນເວລານັ້ນ ລູກຊາຍກົກທັງໝົດໃນປະເທດ ເອຢິບ. ຄືຕັ້ງແຕ່ອົງມຸງກຸດລາຊະກຸມ-
ມານ ລົງມາເຖິງລູກກົກຂອງຂ້າໃຊ້ຍິງໃນ ໂຮງ ໂມ້ແປ້ງຕະຫລອດທັງລູກກົກຂອງສັດເດຍລະ-
ສານຈະຕາຍໝົດ. 6ແລ້ວຈະມີສຽງຮ້ອງໄຫ້ທົ່ວປະເທດ ເອຢິບ ຊຶ່ງແຕ່ກ່ອນ ຫລື ຫລັງຈາກນັ້ນ
ມາກໍບໍ່ເຄີຍມີຢ່າງນີ້ຈັກເທື່ອໃນປະເທດ ເອຢິບ. 7ແຕ່ໃນທ່າມກາງຊາວ ອິສຣາເອນ ນັ້ນຈະງຽບ
ສະຫງົບແມ່ນແຕ່ສຽງໝາເຫົ່າຄົນ ຫລື ສັດກໍບໍ່ມີ ທັງນີ້ກໍເພື່ອໃຫ້ພະອົງຊົງຊາບວ່າ ພຣະຜູ້ເປັນ-
ເຈົ້າ ຊົງກະທຳກັບຊາວ ເອຢິບ ຕ່າງກັບຊາວ ອິສຣາເອນ. 8ຫລັງຈາກນັ້ນ ຂ້າລາຊະການທັງໝົດ

ຂອງພະອົງຈະມາຫາຂ້ານ້ອຍ ແລະ ຂາບລົງເວົ້າວ່າ ຂໍທ່ານກັບປະຊາຊົນທັງປວງຂອງທ່ານໄປ
ເສຍຈາກທີ່ນີ້ ແລ້ວຂ້ານ້ອຍກໍຈະ ອອກໜີໄປ" ຄັນແລ້ວ ໂມເຊກໍທູນລາກະສັດ ຟາຣາໂອໄປ
ດ້ວຍຄວາມຄຽດຮ້າຍທີ່ສຸດ.
9ຕໍ່ມາ ພຣະຜູ້ເປັນເຈົ້າຊົງບອກໂມເຊວ່າ, "ຟາຣາໂອຍັງຈະບໍ່ເຊື່ອຟັງເຈົ້າ ເພື່ອວ່າເຮົາຈະ
ໄດ້ເຮັດການອັດສະຈັນເພີ້ມຂຶ້ນອີກໃນປະເທດເອຢິບ."
10ໂມເຊກັບອາໂຣນໄດ້ກະທຳການອັດສະຈັນເຫລົ່ານັ້ນຊ້ອງໜ້າພະພັກກະສັດຟາຣາໂອ ແຕ່
ພຣະຜູ້ເປັນເຈົ້າໄດ້ຊົງເຮັດໃຫ້ກະສັດຟາຣາໂອມີພະໄທແຂງກະດ້າງຢູ່ຄືເກົ່າ ໂດຍບໍ່ຊົງຍອມ
ໃຫ້ຊາວອິສຣາເອນໄປເສຍຈາກປະເທດເອຢິບ.

# ບົດທີ 12

## ງານປັດສະຄາ

1ພຣະຜູ້ເປັນເຈົ້າຊົງບອກໂມເຊກັບອາໂຣນ ໃນປະເທດເອຢິບວ່າ, "ເດືອນນີ້ກໍເປັນເດືອນທີ
ໜຶ່ງຂອງປີໃໝ່ສຳລັບເຈົ້າທັງຫລາຍແລ້ວ. 2-3"ໃຫ້ເດືອນນີ້ເປັນເດືອນທີໜຶ່ງຂອງປີໃໝ່ສຳລັບເຈົ້າ
ທັງ ຫລາຍແລ້ວ. ພວກເຈົ້າຈົ່ງປະກາດຕໍ່ຊຸມນຸມຊົນອິສຣາເອນວ່າ ໃນວັນທີສິບເດືອນນີ້ ໃຫ້ຜູ້
ຊາຍທຸກຄົນຈັດຕຽມລູກແກະ ຫລື ລູກແບ້ຄອບຄົວລະໜຶ່ງໂຕ. 4ຖ້າຄອບຄົວໃດມີໜອຍຄົນ ຊຶ່ງ
ຈະກິນສັດບໍ່ໝົດ ກໍໃຫ້ຮ່ວມກັບເພື່ອນບ້ານທີ່ຢູ່ໃກ້ຄຽງກັນ ຈັດຕຽມລູກແກະຫລື ລູກແບ້ຄອບ-
ຄົວລະໜຶ່ງໂຕຕາມທີ່ຄິດວ່າຈະກິນໄດ້ໝົດ ແລະ ໃຫ້ເຈົ້ານັບຈຳນວນຄົນທີ່ຈະກິນສັດນັ້ນດ້ວຍ.
5ລູກແກະຂອງເຈົ້າຈະຕ້ອງປາດສະຈາກຕຳໜິ ເປັນສັດໂຕເຖິກ ອາຍຸໜຶ່ງປີ ຈົ່ງເລືອກເອົາໃນ
ຝູງແກະ ຫລື ຝູງແບ້. 6ເຈົ້າຈົ່ງຮັກສາໄວ້ໃຫ້ດີຈົນເຖິງວັນທີສິບສີ່ ແລ້ວໃນຄ່ຳວັນນັ້ນໃຫ້ທີ່ຊຸມ-
ນຸມຊົນອິສຣາເອນຂ້າສັດຂອງເຂົາ. 7ໃຫ້ເຂົາເອົາເລືອດທາໃສ່ໄມ້ຂອບວົງປະຕູບ່ອນກິນລ້ຽງກັນ
ນັ້ນທັງຂ້າງຊ້າຍ ຂ້າງຂວາ ແລະ ຂ້າງເທິງ. 8ໃນຄືນນັ້ນໃຫ້ເຂົາກິນປີ້ງຊີ້ນກັບເຂົ້າຈີ່ບໍ່ໃສ່ເຊື້ອ
ແປ້ງແລະ ຜັກຂົມ. 9ຢ່າກິນຊີ້ນທີ່ຍັງດິບ ຫລື ຊີ້ນຕົ້ມ ແຕ່ໃຫ້ປີ້ງເສຍກ່ອນທັງຫົວ ທັງຂາ
ແລະ ເຄື່ອງໃນທັງໝົດ. 10ຢ່າໃຫ້ມີອັນໃດເຫລືອໄວ້ຮອດມື້ເຊົ້າ ຖ້າມີອັນໃດຍັງເຫລືອຢູ່ກໍໃຫ້ຖິ້ມ
ໃສ່ໄຟເສຍ. 11ກ່ອນພວກເຈົ້າຈະກິນໃຫ້ເຮັດດັ່ງນີ້ ໃຫ້ຮັດສາຍແອວ ສຸບເກີບ ແລະ ຖືໄມ້ເທົ້າ
ໄວ້ ແລ້ວໃຫ້ພ້ອມກັນກິນໄວໆ ການກິນລ້ຽງຢ່າງນີ້ເປັນວັນສະຫລອງປັດສະຄາຖວາຍແດ່
ພຣະຜູ້ເປັນເຈົ້າ.
12ເພາະໃນຄືນນັ້ນ ເຮົາຈະຜ່ານເຂົ້າໄປໃນປະເທດ ເອຢິບ ເຮົາຈະຂ້າລູກກົກຂອງມະນຸດ
ແລະ ຂອງສັດເດຍລະສານທັງໝົດໃນປະເທດເອຢິບ ເຮົາຈະລົງ ໂທດພະທຽມຂອງເອຢິບ
ເຮົາຄືພຣະຜູ້ເປັນເຈົ້າ. 13ເລືອດທີ່ພວກເຈົ້າທາໃສ່ເຮືອນນັ້ນຈະເປັນເຄື່ອງໝາຍສຳຄັນບອກໃຫ້
ຮູ້ວ່າພວກເຈົ້າຢູ່ທີ່ນັ້ນ ເມື່ອເຮົາທຳລາຍປະເທດເອຢິບເຮົາຈະບໍ່ທຳລາຍພວກເຈົ້າ ແລະ ເມື່ອ
ເຮົາເຫັນເລືອດນັ້ນເຮົາຈະຜ່ານເວັ້ນພວກເຈົ້າໄປ.
14ໃຫ້ພວກເຈົ້າຖືເອົາມື້ນີ້ເປັນມື້ລະນຶກເຖິງ ຈົ່ງຈັດສະ ຫລອງມື້ນີ້ ເປັນພິທີລ້ຽງທາງສາດສະ-
ໜາຖວາຍພຣະຜູ້ເປັນເຈົ້າ ໃຫ້ພວກເຈົ້າຖືເອົາມື້ນີ້ເປັນມື້ລ້ຽງສະຫລອງຕະຫລອດໄປທົ່ວທຸກຊົ່ວ

ອາຍຸຄົນ. 15ພວກເຈົ້າຈົ່ງກິນເຂົ້າຈີ່ບໍ່ໃສ່ເຊື້ອແປ້ງໃຫ້ຄົບເຈັດມື້ ໃນມື້ທຳອິດຕ້ອງຍ້າຍເຊື້ອແປ້ງ
ອອກຈາກເຮືອນຂອງພວກເຈົ້າ ເພາະວ່າ ຖ້າຜູ້ໃດກິນເຂົ້າຈີ່ທີ່ໃສ່ເຊື້ອແປ້ງຕັ້ງແຕ່ວັນທີໜຶ່ງຈົນ
ເຖິງວັນທີເຈັດຈະຕ້ອງຕັດຜູ້ນັ້ນອອກຈາກເຊື້ອຊາດອິສຣາເອນ.
16ໃນມື້ທຳອິດກັບມື້ທີເຈັດໃຫ້ມີການຊຸມນຸມທາງສາດສະໜາ ໃນສອງມື້ນີ້ບໍ່ໃຫ້ເຮັດວຽກຫຍັງ
ເວັ້ນໄວ້ແຕ່ການຕຽມອາຫານສຳລັບຮັບປະທານ. 17ພວກເຈົ້າຈົ່ງຖືຮັກສາພິທີກິນເຂົ້າຈີ່ບໍ່ໃສ່ເຊື້ອ
ແປ້ງນີ້ໄວ້ ເພາະໃນມື້ນີ້ເຮົາໄດ້ນຳໄພ່ພົນຂອງເຈົ້າອອກມາຈາກປະເທດເອຢິບ ສະນັ້ນ ຈົ່ງຖືມື້-
ນີ້ເປັນມື້ສະຫລອງປະຈຳປີຕະຫລອດໄປທຸກຊົ່ວອາຍຸຄົນ ໃນຕອນຄ່ຳວັນທີສິບສີ່ຂອງເດືອນທີ
ໜຶ່ງ. 18ໃນຕອນຄ່ຳວັນທີສິບສີ່ຂອງເດືອນທີໜຶ່ງ. ໃຫ້ພວກເຈົ້າກິນເຂົ້າຈີ່ບໍ່ໃສ່ເຊື້ອແປ້ງໄປຈົນ
ເຖິງຕອນຄ່ຳວັນທີຊາວເອັດຂອງເດືອນນັ້ນ. 19ໃນເຈັດມື້ນັ້ນບໍ່ໃຫ້ມີເຊື້ອແປ້ງໃນເຮືອນຂອງພວກ
ເຈົ້າ ເພາະຖ້າຄົນອິສຣາເອນຫລື ຄົນຕ່າງຊາດຄົນໃດກິນເຂົ້າຈີ່ໃສ່ເຊື້ອແປ້ງ ຜູ້ນັ້ນຈະຕ້ອງຖືກ
ຕັດອອກຈາກຊຸມນຸມຊົນອິສຣາເອນ. 20ຢູ່ໃນບ້ານເຮືອນຂອງພວກເຈົ້າ ຈະຕ້ອງບໍ່ກິນເຂົ້າຈີ່
ໃດໆ ທີ່ໃສ່ເຊື້ອ ຈະຕ້ອງກິນແຕ່ເຂົ້າຈີ່ບໍ່ໃສ່ເຊື້ອເທົ່ານັ້ນ.”
21ຕໍ່ມາ ໂມເຊໄດ້ເຊີນພວກເຖົ້າແກ່ອິສຣາເອນມາພ້ອມກັນ ແລ້ວເວົ້າວ່າ, “ທ່ານທັງຫລາຍ
ຈົ່ງໄປເລືອກເອົາລູກແກະ ຫລື ລູກແບ້ຕາມບ້ານເຮືອນຂອງຕົນມາຂ້າເປັນສັດສຳລັບງານສະ-
ຫລອງປັດສະຄາ. 22ແລ້ວໃຫ້ເອົາໃບໄມ້ມັດໜຶ່ງຈຸ່ມເລືອດໃນຂັນ ທາໃສ່ໄມ້ຂອບວົງປະຕູຂ້າງ
ຊ້າຍ ຂ້າງຂວາ ແລະ ຂ້າງເທິງ ຢ່າໃຫ້ຜູ້ໃດອອກໄປພົ້ນປະຕູເຮືອນຂອງຕົນຈົນຮອດມື້ເຊົ້າ.
23ເມື່ອພຣະຜູ້ເປັນເຈົ້າສະເດັດມາທຳລາຍຊາວເອຢິບ ພຣະອົງຈະທອດພຣະເນດເຫັນເລືອດທີ່
ທາໄວ້ນັ້ນ ແລ້ວພຣະອົງຈະບໍ່ໃຫ້ທູດມໍລະນາເຂົ້າໄປໃນເຮືອນ ແລະ ທຳ ລາຍທ່ານ. 24ທ່ານ
ທັງຫລາຍຈົ່ງຖືກົດອັນນີ້ເປັນຄຳສັ່ງຕະຫລອດໄປສຳລັບທ່ານ ແລະ ລູກຫລານ. 25ເມື່ອທ່ານ
ທັງຫລາຍໄປເຖິງແຜ່ນດິນທີ່ພຣະຜູ້ເປັນເຈົ້າຈະຊົງປະທານໃຫ້ ຕາມທີ່ພຣະອົງໄດ້ຊົງໃຫ້ຄຳ-
ໝັ້ນສັນຍາໄວ້ນັ້ນ. ພວກທ່ານຈົ່ງຖືຮັກສາພິທີນີ້ໄວ 26ພວກທ່ານຈົ່ງຖືຮັກສາພິທີນີ້ໄວ້ ຄັນລູກ
ຫລານຂອງທ່ານຖາມວ່າ ພິທີອັນນີ້ໝາຍຄວາມວ່າແນວໃດ? 27ທ່ານທັງຫລາຍຈົ່ງຕອບວ່າ
ແມ່ນງານສະຫລອງປັດສະຄາຖວາຍແດ່ພຣະຜູ້ເປັນເຈົ້າ ເພາະເວລາທີ່ພຣະອົງຊົງທຳລາຍ
ຊາວເອຢິບນັ້ນ ພຣະອົງໄດ້ຊົງຜ່ານເວັ້ນບ້ານເຮືອນຊາວອິສຣາເອນໃນປະເທດເອຢິບ” ແລ້ວ
ປະຊາຊົນໄດ້ຂາບລົງນະມັດສະການພຣະຜູ້ເປັນເຈົ້າ. 28ແລ້ວຊາວອິສຣາເອນກໍເຮັດຕາມຄຳ
ສັ່ງ ທີ່ພຣະຜູ້ເປັນເຈົ້າໄດ້ຊົງສັ່ງໂມເຊແລະອາໂຣນນັ້ນ.

## ການຕາຍຂອງລູກກົກ

29ຕໍ່ມາໃນເວລາທ່ຽງຄືນ ພຣະຜູ້ເປັນເຈົ້າໄດ້ຊົງຂ້າລູກຊາຍກົກທັງໝົດໃນປະເທດເອຢິບ
ຕັ້ງແຕ່ອົງມຸງກຸດລາຊະກຸມມານຜູ້ຈະປະທັບເທິງບັນລັງ ຈົນເຖິງລູກຊາຍກົກຂອງນັກໂທດຜູ້ຢູ່ໃນ
ຄຸກມືດ ແລະ ລູກກົກຂອງສັດເດຍລະສານທັງປວງກໍຊົງຂ້າດ້ວຍ. 30ເມື່ອກະສັດຟາຣາໂອກັບ
ຂ້າລາຊະການ ແລະຊາວ ເອຢິບທັງປວງ ຕື່ນຂຶ້ນໃນເວລາກາງຄືນ ກໍໄດ້ຍິນສຽງຮ້ອງໄຫ້ທົ່ວ
ປະເທດເອຢິບ ເນື່ອງຈາກວ່າບໍ່ມີບ້ານເຮືອນໃດ ທີ່ລູກຊາຍບໍ່ຕາຍ. 31ກະສັດຟາຣາໂອຈຶ່ງຊົງ
ຮັບສັ່ງໃຫ້ໂມເຊກັບ ອາໂຣນເຂົ້າເຝົ້າໃນຄືນນັ້ນຊົງບອກວ່າ, “ເຈົ້າທັງສອງກັບຊາວອິສຣາເອນ

ຈົ່ງອອກໄປເສຍຈາກປະ ເທດຂອງເຮົາ ຈົ່ງໄປບົວລະບັດພຣະຜູ້ເປັນເຈົ້າຕາມທີ່ພວກເຈົ້າໄດ້ຂໍ
ຮ້ອງນັ້ນ. 32ໃຫ້ເອົາຝູງແກະແບ້ ແລະ ຝູງງົວຄວາຍຂອງພວກເຈົ້າໄປນຳ ຈົ່ງໄປເສຍ ໃຫ້
ອ້ອນວອນຂໍພອນສຳລັບເຮົາດ້ວຍ.”

33ປະຊາຊົນ ເອຢິບ ໄດ້ບັງຄັບໃຫ້ຊາວ ອິສຣາເອນ ໄປຈາກປະເທດໂດຍໄວ ພວກເຂົາເວົ້າ
ວ່າ, “ພວກເຮົາຈະຕ້ອງຕາຍກັນໝົດ, ຖ້າພວກນີ້ບໍ່ໜີ.” 34ດັ່ງນັ້ນ ຊາວອິສຣາເອນຈຶ່ງໄດ້ເອົາ
ແປ້ງດິບທີ່ຍັງບໍ່ໄດ້ໃສ່ເຊື້ອແປ້ງກັບຮາງນວດແປ້ງຫໍ່ໃສ່ຜ້າແບກໄປ. 35ພວກເຂົາໄດ້ເຮັດຕາມ
ໂມເຊສັ່ງ ຄືໄດ້ຂໍເອົາເຄື່ອງເງິນ ເຄື່ອງຄຳ ແລະ ເສື້ອຜ້າຈາກຊາວເອຢິບ. 36ພຣະຜູ້ເປັນເຈົ້າ
ກໍຊົງເຮັດໃຫ້ຊາວ ເອຢິບຢຳເກງຊາວອິສຣາເອນ ພວກເຂົາຈຶ່ງມອບສິ່ງຂອງໃຫ້ຕາມທີ່ຊາວອິ-
ສຣາເອນຂໍ ຊາວອິສຣາເອນຈຶ່ງສາມາດຮີບໂຮມເອົາສິ່ງຂອງຕ່າງໆຈາກຊາວເອຢິບໄປ.

## ຊາວອິສຣາເອນອອກຈາກເອຢິບ

37ປະຊາຊົນອິສຣາເອນໄດ້ອອກຈາກເມືອງຣາເມເສດ ເຖິງເມືອງສຸກໂກດ ມີຜູ້ຊາຍທັງໝົດ
ທີ່ຍ່າງໄປດ້ວຍກັນປະມານຫົກແສນຄົນທັງນີ້ບໍ່ນັບຜູ້ຍິງ ແລະ ເດັກນ້ອຍ. 38ນອກນັ້ນ ກໍຍັງມີ
ຊາວຕ່າງຊາດກັບຝູງແກະແບ້ ແລະ ງົວຄວາຍໄປນຳອີກຈຳນວນຫລາຍ. 39ພວກເຂົາໄດ້ເອົາ
ກ້ອນແປ້ງທີ່ຍັງບໍ່ທັນໄດ້ໃສ່ເຊື້ອແປ້ງຊຶ່ງພວກເຂົານຳອອກຈາກປະເທດເອຢິບປີ້ງເປັນອາຫານ
ເພາະວ່າພວກເຂົາຖືກບັງຄັບໃຫ້ອອກຈາກປະເທດເອຢິບໂດຍໄວ ຈຶ່ງບໍ່ມີເວລາຈັດຕຽມສະບຽງ
ອາຫານ.

40-41ຊາວອິສຣາເອນໄດ້ຢູ່ໃນປະເທດເອຢິບເປັນເວລາສີ່ຮ້ອຍສາມສິບປີ. ໄພ່ພົນຂອງພຣະ-
ຜູ້ເປັນເຈົ້າໄດ້ອອກຈາກປະເທດ ເອຢິບໃນມື້ທີ່ຄົບ 430 ປີພໍດີ. 42ມື້ນັ້ນເປັນເວລາກາງຄືນ
ແລະ ພຣະຜູ້ເປັນເຈົ້າກໍຊົງເຝົ້າເບິ່ງຢູ່ ເພື່ອຊົງນຳເຂົາອອກຈາກປະເທດເອຢິບ ຊາວອິສຣາ-
ເອນຈຶ່ງຖືເອົາມື້ຄືນນັ້ນເປັນຄືນຢູ່ເຝົ້າ ເພື່ອລະນຶກເຖິງພຣະຜູ້ເປັນເຈົ້າຕະຫລອດມາທຸກຊົ່ວອາຍຸ
ຄົນ.

## ກົດລະບຽບງານລະຫລອງປັດສະຄາ

43ຕໍ່ມາ ພຣະຜູ້ເປັນເຈົ້າຊົງບອກໂມເຊແລະ ອາໂຣນວ່າ, “ຕໍ່ໄປນີ້ແມ່ນກົດລະບຽບກ່ຽວກັບ
ງານສະຫລອງປັດສະຄາ ຄືຄົນຕ່າງຊາດບໍ່ໃຫ້ຮ່ວມກິນນຳ. 44ແຕ່ຂ້າທາດທີ່ນາຍຊື້ມາ ແລະ
ຮັບພິທີຕັດແລ້ວໃຫ້ຮ່ວມກິນນຳໄດ້ ສ່ວນຄົນຜູ້ອາໄສຊົ່ວຄາວ ຫລື ລູກຈ້າງບໍ່ໃຫ້ກິນນຳ.
45-46ສ່ວນຄົນຜູ້ອາໄສຊົ່ວຄາວ ຫລື ລູກຈ້າງບໍ່ໃຫ້ກິນນຳ.ປັດສະຄານັ້ນໃຫ້ກິນຢູ່ເຮືອນໃຜລາວ
ຢ່າເອົາຊີ້ນອອກໄປນອກເຮືອນ ຢ່າຫັກກະດູກໃດໆ ຂອງສັດນັ້ນ ໃຫ້ຊຸມນຸມຊົນອິສຣາເອນ
ທັງໝົດໃຫ້ເຂົ້າຮ່ວມໃນພິທີກິນລ້ຽງນີ້. 47-48ໃຫ້ຊຸມນຸມຊົນອິສຣາເອນທັງໝົດໃຫ້ເຂົ້າຮ່ວມໃນພິທີ
ກິນລ້ຽງນີ້

ຖ້າຄົນຕ່າງຊາດທີ່ອາໄສຢູ່ນຳພວກເຈົ້າຢາກຈະຈັດງານສະຫລອງປັດສະຄາຖວາຍພຣະຜູ້-
ເປັນເຈົ້າກໍໃຫ້ຊາຍພວກນັ້ນທຸກຄົນຮັບພິທີຕັດເສຍກ່ອນ ແລ້ວຈຶ່ງໃຫ້ເຂົາເຂົ້າຮ່ວມໃນພິທີລ້ຽງນີ້
ໄດ້ ເຂົາຈະຖືກຖືວ່າເປັນຄົນເຊື້ອຊາດອິສຣາເອນ ແຕ່ຜູ້ໃດບໍ່ໄດ້ຮັບພິທີຕັດ ຢ່າໃຫ້ກິນ. 49ທັງ
ຄົນອິສຣາເອນແລະ ຄົນຕ່າງດ້າວທີ່ອາໄສຢູ່ນຳພວກເຈົ້າ ກໍໃຫ້ໃຊ້ກົດລະບຽບອັນດຽວກັນນີ້.”

50ຊາວ ອິສຣາເອນ ທັງປວງ ໄດ້ເຊື່ອຟັງ ແລະ ເຮັດຕາມນີ້ທຸກຢ່າງ ຄື ພຣະຜູ້ເປັນເຈົ້າ ໄດ້ຊົງ
ສັ່ງ ໂມເຊ ແລະ ອາໂຣນ ຢ່າງໃດ ເຂົາກໍເຮັດຕາມຢ່າງນັ້ນ. 51ໃນມື້ນີ້ແຫລະ ພຣະຜູ້ເປັນເຈົ້າ ຊົງ
ນຳຊາວ ອິສຣາເອນ ອອກຈາກ ເອຢິບ ເປັນຂະບວນກອງທັບ.

## ບົດທີ 13

### ການຖວາຍລູກກົກ

1ພຣະຜູ້ເປັນເຈົ້າ ຊົງບອກ ໂມເຊ ວ່າ, 2“ຈົ່ງຖວາຍລູກກົກທັງປວງຂອງຊາວ ອິສຣາເອນ ແກ່
ເຮົາ ຄືລູກກົກຂອງຄົນ ແລະ ຂອງສັດທັງໝົດເປັນຂອງເຮົາ.”

### ພິທີລ້ຽງດ້ວຍເຂົ້າຈີ່ບໍ່ໃສ່ເຊື້ອແປ້ງ

3ໂມເຊ ໄດ້ເວົ້າກັບປະຊາຊົນວ່າ, “ຈົ່ງລະນຶກເຖິງມື້ນີ້ ຄືມື້ທີ່ທ່ານທັງຫລາຍໄດ້ອົບພະຍົບອອກ
ຈາກ ເອຢິບ ຈາກປະເທດທີ່ພວກທ່ານໄດ້ຕົກເປັນທາດ ເພາະ ພຣະຜູ້ເປັນເຈົ້າ ໄດ້ຊົງນຳທ່ານ
ທັງຫລາຍອອກຈາກທີ່ນັ້ນ ດ້ວຍອຳນາດອັນຍິ່ງໃຫຍ່ ສະນັ້ນ ຢ່າກິນເຂົ້າຈີ່ທີ່ໃສ່ເຊື້ອແປ້ງ.
4-5ທ່ານທັງຫລາຍໄດ້ອົບພະຍົບອອກຈາກ ເອຢິບ ໃນມື້ນີ້ ໃນເດືອນທີໜຶ່ງ. ພຣະຜູ້ເປັນເຈົ້າ
ໄດ້ຊົງສັນຍາໄວ້ເດັດຂາດກັບບັນພະບູລຸດຂອງທ່ານທັງຫລາຍວ່າ ຈະຊົງຍົກແຜ່ນດິນທີ່ອຸດົມ
ສົມບູນຂອງຊາວ ການາອານ ຊາວຮິດຕີ ຊາວ ອະໂມຣິດ ຊາວຮີວີ ແລະຊາວ ເຢບຸດ ໃຫ້ແກ່
ທ່ານທັງຫລາຍ ເມື່ອພຣະອົງຊົງນຳທ່ານທັງຫລາຍ ເຂົ້າໄປເຖິງ ແຜ່ນດິນ ເຫລົ່ານີ້ ພວກທ່ານຈົ່ງ
ຈັດງານສະຫລອງນີ້ໃນ ເດືອນນີ້. 6ຈົ່ງກິນເຂົ້າຈີ່ບໍ່ໃສ່ເຊື້ອແປ້ງເປັນເວລາເຈັດມື້ ໃນມື້ທີເຈັດໃຫ້
ຈັດງານສະຫລອງຖວາຍແດ່ ພຣະຜູ້ເປັນເຈົ້າ. 7ຈົ່ງກິນເຂົ້າຈີ່ບໍ່ໃສ່ເຊື້ອແປ້ງໃຫ້ຄົບເຈັດມື້ ຢ່າໃຫ້
ມີເຂົ້າຈີ່ໃສ່ເຊື້ອແປ້ງໃນແຜ່ນດິນຂອງພວກທ່ານ.
8ໃນມື້ນັ້ນ ຈົ່ງອະທິບາຍໃຫ້ລູກຂອງທ່ານຟັງວ່າ ທີ່ໄດ້ຈັດພິທີລະນຶກເຖິງຂຶ້ນກໍເນື່ອງຈາກວ່າ
ພຣະຜູ້ເປັນເຈົ້າ ໄດ້ຊົງຊ່ອຍ ເຫລືອ ເຮົາ ຄາວ ເມື່ອ ເຮົາໄດ້ອົບພະຍົບອອກຈາກປະເທດ ເອຢິບ.
9ງານສະຫລອງນີ້ຈະ ເປັນເໝືອນ ເຄື່ອງໝາຍໄວ້ໃນມືຂອງພວກທ່ານ ຫລື ເປັນອະນຸສອນຂອງ
ການລະນຶກເຖິງຢູ່ເທິງໜ້າຜາກຂອງພວກທ່ານ ເພື່ອວ່າພວກທ່ານຈະໄດ້ກ່າວເຖິງພຣະທຳຂອງ
ພຣະຜູ້ເປັນເຈົ້າ ສືບຕໍ່ໄປ ເພາະພຣະອົງ ໄດ້ຊົງນຳພວກທ່ານອອກຈາກ ເອຢິບ ດ້ວຍອຳນາດອັນ
ຍິ່ງໃຫຍ່. 10ທ່ານທັງຫລາຍຈົ່ງຈັດງານສະຫລອງນີ້ທຸກໆ ປີເມື່ອເຖິງກຳນົດ.

### ເລື່ອງລູກກົກ

11ພຣະຜູ້ເປັນເຈົ້າ ຈະຊົງນຳທ່ານທັງຫລາຍ ເຂົ້າໄປຍັງ ແຜ່ນດິນ ການາອານ ຄື ແຜ່ນດິນທີ່
ພຣະອົງ ໄດ້ຊົງສັນຍາວ່າ ຈະໃຫ້ພວກທ່ານ ແລະ ບັນພະບູລຸດຂອງພວກທ່ານ. 12ເມື່ອນັ້ນ
ທ່ານທັງຫລາຍ ຈົ່ງຖວາຍລູກຊາຍກົກທັງໝົດ ແກ່ ພຣະຜູ້ເປັນເຈົ້າ ແລະ ສຳລັບສັດ ໂຕເຖິກທີ່
ເປັນລູກກົກທຸກ ໂຕຂອງທ່ານ ເປັນຂອງ ພຣະຜູ້ເປັນເຈົ້າ ຈົ່ງຈັດເອົາລູກແກະ ໄຖ່ເອົາລູກກົກລໍ ໂຕ
ເຖິກ. 13ຈົ່ງ ຈັດ ເອົາລູກ ແກະ ໄຖ່ ເອົາລູກກົກລໍ ໂຕ ເຖິກ. ຖ້າພວກທ່ານບໍ່ໄຖ່ ຈົ່ງຫັກຄໍມັນເສຍ
ສ່ວນລູກຊາຍກົກຂອງພວກທ່ານທັງຫລາຍ ຈົ່ງໄຖ່ໄວ້.
14ຕໍ່ໄປພາຍໜ້າເມື່ອລູກຂອງພວກທ່ານຖາມວ່າ ທີ່ເຮັດນີ້ໝາຍຄວາມວ່າແນວໃດ? ທ່ານທັງ-

ຫລາຍຈຶ່ງບອກເຂົາວ່າ ພຣະຜູ້ເປັນເຈົ້າໄດ້ຊົງນຳພວກເຮົາອອກມາຈາກປະເທດ ເອຢິບບ່ອນຕົກ
ເປັນທາດ ດ້ວຍຣິດທານຸພາບອັນຍິ່ງໃຫຍ່. 15ເມື່ອກະສັດ ຟາຣາໂອ ມີພະໄທແຂງກະດ້າງ ບໍ່
ຍອມປ່ອຍໃຫ້ພວກເຮົາມາ ພຣະຜູ້ເປັນເຈົ້າຈຶ່ງຊົງຂ້າລູກກົກທັງຫລາຍຂອງຊາວ ເອຢິບ ທັງລູກ-
ກົກຂອງຄົນ ແລະ ສັດເດຍລະສານ ດ້ວຍເຫດນີ້ ເຮົາຈຶ່ງເຜົາລູກກົກຂອງໂຕ ສັດຖວາຍ,
ສ່ວນລູກກົກທັງຫລາຍຂອງເຮົານັ້ນ ເຮົາກໍໄຖ່ເອົາໄວ້. 16ດັ່ງນັ້ນ ງານສະຫລອງນີ້ຈະເປັນເຄື່ອງ
ເຕືອນຈິດໃຈຂອງ ທ່ານຄືກັບເຄື່ອງໝາຍໃນມືຂອງພວກທ່ານ ຫລື ຄືກັບເຄື່ອງໝາຍສຳຄັນທີ່ຢູ່
ເທິງໜ້າຜາກຂອງພວກທ່ານ ເພາະ ພຣະຜູ້ເປັນເຈົ້າ ໄດ້ຊົງນຳພວກເຮົາອອກມາຈາກປະເທດ
ເອຢິບ ດ້ວຍອຳນາດອັນຍິ່ງໃຫຍ່."

### ກ້ອນເສົາເມກ ແລະ ແປວໄຟ

17ເມື່ອກະສັດ ຟາຣາໂອ ຊົງປ່ອຍປະຊາຊົນ ອິສຣາເອນ ໄປ ພຣະເຈົ້າບໍ່ໄດ້ນຳພວກເຂົາຂຶ້ນ
ໄປທາງປະເທດ ຟີລິດສະຕິນ ເຖິງແມ່ນວ່າທາງນັ້ນເປັນທາງໃກ້ກໍຕາມ ເພາະ ພຣະເຈົ້າ ຊົງກ່າວ
ວ່າ, "ປະຊາຊົນອາດຈະປ່ຽນໃຈກັບຄືນ ເອຢິບ ອີກ ເມື່ອພວກເຂົາເຫັນສົງຄາມທີ່ຕ້ອງສູ້ຮົບ."
18ດັ່ງນັ້ນ ພຣະເຈົ້າ ຈຶ່ງຊົງນຳເຂົາອ້ອມໄປທາງຖິ່ນກັນດານ ມຸ່ງໜ້າໄປຍັງທະເລແດງ ຊາວອິ-
ສຣາເອນ ໄດ້ອົບພະຍົບອອກຈາກປະເທດ ເອຢິບ ເປັນຂະບວນເສິກພ້ອມທີ່ຈະເຮັດສົງຄາມ
ໂມເຊ ໄດ້ເອົາກະດູກຂອງ ໂຢເຊັບ ໄປດ້ວຍ. 19ໂມເຊ ໄດ້ເອົາກະດູກຂອງ ໂຢເຊັບ ໄປດ້ວຍ.
ເພາະ ໂຢເຊັບ ໄດ້ສັນຍາກັບຊາວ ອິສຣາເອນ ວ່າ, "ພຣະເຈົ້າ ຈະຊ່ອຍເຫລືອພວກເຈົ້າຢ່າງ
ແນ່ນອນ ດັ່ງນັ້ນ ພວກເຈົ້າຕ້ອງເອົາກະດູກຂອງເຮົາອອກໄປຈາກທີ່ນີ້ດ້ວຍ."
20ປະຊາຊົນ ອິສຣາເອນ ໄດ້ອົບພະຍົບອອກຈາກ ສຸກໂກດ ໄປຕັ້ງຄ້າຍພັກເຊົາຢູ່ ເອທາມ
ແຄມຖິ່ນກັນດານ. 21ໃນລະຫວ່າງເວລານັ້ນ ພຣະຜູ້ເປັນເຈົ້າ ໄດ້ສະເດັດນຳໜ້າພວກເຂົາໄປ
ດ້ວຍກ້ອນເສົາເມກໃນເວລາກາງເວັນ ເພື່ອບອກທາງໃຫ້ພວກເຂົາໄປ ແລະ ຊົງນຳໜ້າພວກ
ເຂົາໄປດ້ວຍແປວເສົາໄຟໃນເວລາກາງຄືນ ເພື່ອໃຫ້ເຂົາໄດ້ຮັບແສງສະຫວ່າງ ໃຫ້ສາມາດເດີນ-
ທາງໄປໄດ້ທັງກາງເວັນ ແລະ ກາງຄືນ. 22ກ້ອນເສົາເມກໄດ້ນຳໜ້າເຂົາໄປໃນເວລາກາງເວັນ
ແລະແປວເສົາໄຟໄດ້ນຳໜ້າໄປໃນເວລາກາງຄືນ.

# ບົດທີ 14

### ຂ້າມທະເລ

1ພຣະຜູ້ເປັນເຈົ້າ ຊົງບອກ ໂມເຊ ວ່າ, 2"ຈົ່ງບອກໃຫ້ຊາວ ອິສຣາເອນ ກັບຄືນໄປຕັ້ງຄ້າຍພັກ
ເຊົາຢູ່ຕໍ່ໜ້າ ປີຮາຮີໂຣດ ລະຫວ່າງ ມິກໂດນ ກັບທະເລ ຕໍ່ໜ້າ ບາອານ ເຊໂຟນ ໃກ້ໆທະເລ.
3ແລ້ວກະສັດ ຟາຣາໂອ ຄິດວ່າປະຊາຊົນ ອິສຣາເອນ ໜີໄປຈາກປະເທດເພິ່ນບໍ່ໄດ້ ເພາະວ່າເຂົາ
ຫລົງທາງໄປຖິ່ນກັນດານ. 4ເຮົາຈະເຮັດໃຫ້ຈິດໃຈກະສັດ ຟາຣາໂອ ແຂງກະດ້າງ ແລ້ວເພິ່ນຈະ
ໄລ່ຕິດຕາມມາ ເຮົາຈະມີໄຊຊະນະກະສັດ ຟາຣາໂອ ແລະທະຫານທັງໝົດຂອງເພິ່ນ ຈະນຳຊື່
ສຽງມາສູ່ເຮົາ ຊາວ ເອຢິບ ຈະຮູ້ວ່າເຮົາຄື ພຣະຜູ້ເປັນເຈົ້າ" ອິສຣາເອນ ໄດ້ພາກັນເຮັດຕາມພະ
ດຳລັດນັ້ນ.

5ເມື່ອ ຟາຣາໂອກະສັດຂອງ ເອຢິບ ຊົງຊາບວ່າ ປະຊາຊົນ ອິສຣາເອນ ໜີໄປໄດ້ແລ້ວ ພະອົງ
ກັບຂ້າລາຊະການຂອງພະອົງກໍປ່ຽນຄວາມຄິດໃໝ່ ໂດຍເວົ້າວ່າ, “ເຫດໃດພວກເຮົາຈຶ່ງປ່ອຍໃຫ້
ປະຊາຊົນ ອິສຣາເອນ ໜີຈາກການ ເປັນທາດຮັບໃຊ້ພວກເຮົາ.” 6ກະສັດ ຟາຣາໂອ ຈຶ່ງຈັດຕຽມລົດ
ຮົບແລະພົນທະຫານຕິດຕາມໄປກັບພະອົງ. 7ພະອົງໄດ້ເອົາລົດຮົບຢ່າງດີຫົກຮ້ອຍຄັນກັບລົດຮົບ
ອື່ນໆ ອີກໄປດ້ວຍມີນາຍທະຫານປະຈຳຢູ່ທຸກຄັນ.
8ພຣະຜູ້ເປັນເຈົ້າ ໄດ້ຊົງ ເຮັດໃຫ້ກະສັດ ຟາຣາໂອ ມີພະໄທ ແຂງກະດ້າງ ຟາຣາໂອ ຈຶ່ງໄດ້ໄລ່
ຕິດຕາມປະຊາຊົນ ອິສຣາເອນ ໄປ ຊຶ່ງເຂົາກຳລັງຍົກຂະບວນອອກໄປດ້ວຍຄວາມ ຄຸ້ມຄອງຂອງ
ພຣະຜູ້ເປັນເຈົ້າ. 9ຊາວ ເອຢິບ ພ້ອມດ້ວຍຂະບວນລົດມ້າ ຄົນຂັບລົດ ແລະ ເຫລົ່າທະຫານ ໃນ
ກອງທັບຂອງກະສັດ ຟາຣາໂອ ໄດ້ໄລ່ຕິດຕາມມາ ພວກເຂົາໄດ້ມາທັນພວກ ອິສຣາເອນ ຢູ່ຄ້າຍ
ພັກແຄມທະເລ ໃກ້ໆ ກັບ ປີຮາຮີໂຣດ ຕໍ່ໜ້າ ບາອານ ເຊໂຟນ. 10ເມື່ອກອງທັບຂອງກະສັດ ຟາ-
ຣາໂອ ເຂົ້າມາໃກ້ ຊາວ ອິສຣາເອນ ກໍເຫັນກອງທັບທີ່ຍົກມາຕໍ່ສູ້ຕົນ ພວກເຂົາຈຶ່ງຢ້ານແລະຮ້ອງ-
ໄຫ້ ຂໍໃຫ້ ພຣະຜູ້ເປັນເຈົ້າ ຊົງຊ່ວຍ. 11ພວກເຂົາໄດ້ເວົ້າກັບ ໂມເຊ ວ່າ, “ໃນ ເອຢິບ ບໍ່ມີບ່ອນຝັງ
ສົບບໍ ທ່ານຈຶ່ງໄດ້ພາພວກເຮົາອອກມາຕາຍໃນຖິ່ນກັນດານນີ້? ເປັນຫຍັງຈຶ່ງພາພວກເຮົາອອກ
ມາຈາກ ເອຢິບ? 12ຄາວຢູ່ໃນ ເອຢິບ ພວກ ເຮົາ ໄດ້ບອກທ່ານ ແລ້ວ ເລື່ອງນີ້ຈະ ເກີດຂຶ້ນ ແມ່ນບໍ?
ພວກເຮົາເວົ້າວ່າຈົ່ງປ່ອຍ ໃຫ້ພວກ ເຮົາຢູ່ຕາມລຳພັງ ພວກ ເຮົາຈະຢູ່ ເປັນທາດຮັບ ໃຊ້ຄົນ ເອຢິບ
ເພາະຢູ່ເປັນທາດຮັບໃຊ້ຄົນ ເອຢິບ ຍັງດີກວ່າຈະມາຕາຍ ໃນຖິ່ນກັນດານນີ້.”
13ໂມເຊ ໄດ້ຕອບປະຊາຊົນວ່າ, “ຢ່າຢ້ານເລີຍ ຈົ່ງຍຶດໝັ້ນຢູ່ ຈົ່ງຄອຍເບິ່ງສິ່ງທີ່ ພຣະຜູ້ເປັນ-
ເຈົ້າ ຈະຊ່ວຍໃຫ້ພົ້ນໃນມື້ນີ້ ແລ້ວຊາວ ເອຢິບ ທີ່ທ່ານທັງຫລາຍ ໄດ້ເຫັນໃນມື້ນີ້ ຕໍ່ໄປຈະບໍ່ໄດ້ເຫັນ
ອີກ ຈັກ ເທື່ອ. 14ພຣະຜູ້ເປັນເຈົ້າ ຈະຊົງຮົບ ແທນທ່ານທັງຫລາຍ ດອກ ພວກທ່ານບໍ່ຕ້ອງ ເຮັດ
ຫຍັງ.”
15ຕໍ່ມາ ພຣະຜູ້ເປັນເຈົ້າ ຊົງກ່າວກັບ ໂມເຊ ວ່າ, “ເປັນຫຍັງເຈົ້າຈຶ່ງຮ້ອງທຸກຕໍ່ເຮົາ ຈົ່ງບອກໃຫ້
ຊາວ ອິສຣາເອນ ມຸ່ງໜ້າຕໍ່ໄປ. 16ຝ່າຍ ເຈົ້າຈົ່ງຍົກໄມ້ເທົ້າຂອງ ເຈົ້າຂຶ້ນ ແລ້ວເດ່ມືອອກໄປທາງ
ທະເລ ເຮັດໃຫ້ນ້ຳທະເລນັ້ນແຍກອອກ ເພື່ອຊາວ ອິສຣາເອນ ຈະໄດ້ຍ່າງຂ້າມໄປເທິງດິນກາງ
ທະເລ. 17ສ່ວນເຮົາຈະເຮັດໃຫ້ໃຈຊາວ ເອຢິບ ແຂງກະດ້າງ ແລະ ໄລ່ຕິດຕາມໄປ ເຮົາຈະມີໄຊ-
ຊະນະ ເໜືອກະສັດ ຟາຣາໂອ ກອງທັບພ້ອມທັງລົດຮົບ ແລະຄົນຂັບລົດຂອງ ຟາຣາໂອ ຈະນຳ
ກຽດຕິຍົດມາໃຫ້ເຮົາ. 18ເມື່ອເຮົາຊະນະເຂົາທັງໝົດແລ້ວ ຊາວ ເອຢິບ ຈຶ່ງຈະຮູ້ວ່າ ເຮົາຄື ພຣະ-
ຜູ້ເປັນເຈົ້າ.”
19ຝ່າຍທູດຂອງ ພຣະເຈົ້າ ທີ່ນຳໜ້າກອງທັບ ອິສຣາເອນ ໄດ້ກັບໄປຢູ່ຂ້າງຫລັງ ກ້ອນເສົາເມກ
ຊຶ່ງຢູ່ຂ້າງໜ້າ ກໍກັບມາຕັ້ງຢູ່ຂ້າງຫລັງພວກເຂົາຄືໄດ້ມາຢູ່ລະຫວ່າງກອງທັບ ເອຢິບ ກັບກອງທັບ
ອິສຣາເອນ. 20ເມກນັ້ນໄດ້ເຮັດໃຫ້ມີຄວາມມືດ ບໍ່ໃຫ້ທັງສອງຝ່າຍເຂົ້າໃກ້ກັນໄດ້ ຄືນນັ້ນຈຶ່ງໄດ້
ຜ່ານພົ້ນໄປ. 21ໂມເຊ ໄດ້ເດ່ມືຂອງລາວອອກໄປທາງທະເລ ພຣະຜູ້ເປັນເຈົ້າ ຈຶ່ງຊົງ ໃຫ້ລົມຮ້ອນ
ທາງທິດຕາເວັນອອກພັດທະເລຕະຫລອດຄືນ ເຮັດໃຫ້ທະເລເປັນດິນແຫ້ງນ້ຳໄດ້ແຍກອອກຈາກ
ກັນ. 22ປະຊາຊົນ ອິສຣາເອນ ຈຶ່ງພາກັນຍ່າງຂ້າມໄປເທິງດິນກາງທະເລ ໂດຍມີກຳແພງນ້ຳຕັ້ນ

ໄວ້ທັງສອງຂ້າງທາງຝ່າຍ ເອຢິບກໍໄລ່ຕິດຕາມເຂົ້າມາເຖິງທະເລ.

[23]ພ້ອມກັບຝູງມ້າລົດຮົບ ແລະຄົນຂັບລົດຂອງກະສັດ ຟາຣາໂອ. [24]ຄັນຮອດເວລາເຊົ້າມືດ
ພຣະຜູ້ເປັນເຈົ້າໄດ້ທອດພະເນດເບິ່ງກອງທັບ ເອຢິບ ຈາກທາງແປວເສົາໄຟ ແລະກ້ອນເສົາເມກ
ຈຶ່ງຊົງໃຫ້ກອງທັບ ເອຢິບ ເກີດໂກລາຫົນຂຶ້ນ. [25]ພຣະອົງຊົງເຮັດໃຫ້ລໍ້ລົດຂອງພວກເຂົາຝືດ ເພື່ອ
ໃຫ້ມັນແລ່ນໄປໄດ້ຍາກທີ່ສຸດ ຊາວ ເອຢິບ ຈຶ່ງເວົ້າວ່າ, "ພວກເຮົາພາກັນແລ່ນໜີໄປຈາກຊາວອິ-
ສຣາເອນ ເສຍເທາະ ເພາະວ່າພຣະຜູ້ເປັນເຈົ້າຊົງຕໍ່ສູ້ເຮົາແທນເຂົາແລ້ວ."

[26]ຕໍ່ມາພຣະຜູ້ເປັນເຈົ້າຊົງກ່າວກັບ ໂມເຊວ່າ, "ຈົ່ງເດ່ມືເຈົ້າອອກໄປທາງທະເລ ເພື່ອໃຫ້ນໍ້າ
ໄຫລມາຖ້ວມຊາວ ເອຢິບ ຖ້ວມລົດຮົບແລະຄົນຂັບລົດຂອງພວກເຂົາ." [27]ໂມເຊຈຶ່ງເດ່ມືອອກໄປ
ທາງທະເລ ຄັນຕົກມື້ເຊົ້າມານໍ້າທະເລກໍກັບຄືນສູ່ສະພາບເດີມ ຊາວ ເອຢິບ ໄດ້ພະຍາຍາມໜີ
ແຕ່ໜີບໍ່ໄດ້ ເພາະຖືກກະແສນໍ້າພັດ ພຣະຜູ້ເປັນເຈົ້າໄດ້ຊົງຊຸກຍູ້ຊາວ ເອຢິບ ລົງທະເລ. [28]ນໍ້າ
ໄດ້ໄຫລຖ້ວມລົດຮົບ ພ້ອມທັງຄົນຂັບລົດແລະກອງທັບຂອງກະສັດ ຟາຣາໂອ ທັງໝົດ ຊຶ່ງພວກ
ເຂົາໄດ້ໄລ່ຕິດຕາມເຖິງທະເລ ນໍ້າໄດ້ຖ້ວມໝົດບໍ່ເຫລືອຈັກຄົນ. [29]ແຕ່ຝ່າຍ ອິສຣາເອນ ໄດ້ພາກັນ
ຍ່າງໄປເທິງດິນກາງທະເລ ໂດຍມີກຳແພງຕັ້ງໄວ້ທັງຂ້າງຊ້າຍແລະຂ້າງຂວາ. [30]ໃນມື້ນັ້ນ ພຣະ-
ຜູ້ເປັນເຈົ້າຊົງ ໂຜດຊ່ອຍຊາວ ອິສຣາເອນ ໃຫ້ພົ້ນຈາກເງື້ອມມືຂອງຊາວ ເອຢິບ ຊາວ ອິສຣາເອນ
ໄດ້ເຫັນຊາວ ເອຢິບ ຕາຍຢູ່ຕາມທະເລ. [31]ເມື່ອຊາວ ອິສຣາເອນ ໄດ້ເຫັນການກະທຳອັນຍິ່ງໃຫຍ່ທີ່
ພຣະຜູ້ເປັນເຈົ້າໄດ້ຊົງກະທຳຕໍ່ສູ້ຊາວ ເອຢິບ ພວກເຂົາກໍຢຳເກງແລະເຊື່ອຖືພຣະຜູ້ເປັນເຈົ້າກັບ
ໂມເຊຜູ້ຮັບໃຊ້ຂອງພຣະອົງ.

# ບົດທີ 15

## ບົດເພງຂອງໂມເຊ

[1]ຂະນະນັ້ນ ໂມເຊ ກັບປະຊາຊົນ ອິສຣາເອນ ໄດ້ຮ້ອງເພງສັນລະເສີນ ພຣະຜູ້ເປັນເຈົ້າ ດັ່ງຕໍ່
ໄປນີ້:

"ຂ້າພະເຈົ້າຈະຮ້ອງເພງສັນລະເສີນ ພຣະຜູ້ເປັນເຈົ້າ
ເພາະພຣະອົງຊົງມີໄຊຊະນະຢ່າງໃຫຍ່ຫລວງ
ພຣະອົງໄດ້ຊົງຊຸກມ້າ ແລະ ຄົນຂັບລົດລົງໃນທະເລ.
[2] ພຣະຜູ້ເປັນເຈົ້າຊົງເຮັດໃຫ້ຂ້າພະເຈົ້າແຂງແຮງ ແລະມີກຳລັງ
ພຣະອົງຊົງຊ່ອຍໃຫ້ຂ້າພະເຈົ້າພົ້ນ.
ພຣະອົງຊົງເປັນ ພຣະເຈົ້າຂອງຂ້າພະເຈົ້າ
ແລະ ຂ້າພະເຈົ້າຈະສັນລະເສີນພຣະອົງ
ຊົງເປັນ ພຣະເຈົ້າບັນພະບູລຸດຂອງຂ້າພະເຈົ້າ
ຂ້າພະເຈົ້າຈະຮ້ອງເພງສັນລະເສີນຄວາມຍິ່ງໃຫຍ່ຂອງພຣະອົງ.
[3] ພຣະຜູ້ເປັນເຈົ້າຊົງເປັນນັກຮົບ
ພຣະຜູ້ເປັນເຈົ້າ ແມ່ນພຣະນາມຂອງພຣະອົງ.

4 ພຣະອົງຊົງໂຍນລົດຮົບ ແລະ ເຫລົ່າທະຫານຂອງຟາຣາໂອລົງໃນທະເລ
ນາຍທະຫານຊັ້ນຍອດຂອງຟາຣາໂອໄດ້ຈົມລົງພື້ນທະເລແດງ.
5 ນໍ້າທະເລເລິກໄດ້ຖ້ວມເຂົາ
ເຂົາໄດ້ຈົມລົງພື້ນທະເລເໝືອນດັ່ງກ້ອນຫີນ.
6 ຂ້າແດ່ພຣະຜູ້ເປັນເຈົ້າພຣະຫັດເບື້ອງຂວາອັນແຂງ ແຮງຂອງພຣະອົງ
ຊົງອັດສະຈັນຫລາຍ
ພຣະຫັດນັ້ນຊົງທຳລາຍສັດຕູຂາດເປັນຕ່ອນໆ.
7 ພຣະອົງຊົງທຳລາຍຄູ່ຕໍ່ສູ້ຂອງພຣະອົງ ດ້ວຍເດຊະນຸພາບອັນຍິ່ງໃຫຍ່”
ພຣະພິໂລດຂອງພຣະອົງຊົງແຜດເຜົາເຂົາໄໝ້ ເໝືອນດັ່ງຕໍເຟືອງ.
8 ພຣະອົງຊົງເປົ່າໃຫ້ນໍ້າຂຶ້ນສູງດ້ວຍລົມຫັນໃຈຂອງພຣະອົງ
ນໍ້າໄດ້ຖ້ວມສູງຂຶ້ນຊື່
ເໝືອນດັ່ງກຳແພງນໍ້າທະເລເລິກໄດ້ແຫ້ງລົງໄປເຖິງພື້ນ.
9 ພວກສັດຕູໄດ້ເວົ້າວ່າ ເຮົາຈະໄລ່ຕິດຕາມຈັບເອົາໃຫ້ໄດ້
ເຮົາຈະຍຶດເອົາຊັບສົມບັດຂອງພວກເຂົາ
ເຮົາຈະຊັກດາບອອກ ແລະ ຍຶດເອົາທຸກສິ່ງທີ່ເຂົາມີດ້ວຍກຳ ລັງຂອງເຮົາ.
10 ແຕ່ພຣະອົງຊົງໃຫ້ລົມຂອງພຣະອົງພັດມາ ນໍ້າທະເລຈຶ່ງຖ້ວມພວກເຂົາ
ພວກເຂົາໄດ້ຈົມລົງໃນນໍ້າເລິກເໝືອນຂີ້ກົ່ວ.
11 ຂ້າແດ່ພຣະຜູ້ເປັນເຈົ້າ
ໃນບັນດາພະນັ້ນ ແມ່ນອົງໃດນໍ ຈະເໝືອນກັບພຣະອົງ
ຜູ້ຊົງບໍລິສຸດຮຸ່ງເຮືອງ ອົງໃດນໍ ຈະເໝືອນກັບພຣະອົງ
ຜູ້ຊົງກະທຳການອັດສະ ຈັນ ແລະ ການຍິ່ງໃຫຍ່ອັນໜ້າຢ້ານ.
12 ພຣະອົງຊົງຢຽດພຣະຫັດເບື້ອງຂວາອອກ
ແຜ່ນດິນຈຶ່ງໄດ້ກືນເຂົາທັງຫລາຍເສຍ.
13 ພຣະອົງໄດ້ຊົງນຳປະຊາຊົນອອກມາດ້ວຍຄວາມຮັກໝັ້ນຄົງຂອງພຣະອົງ
ຄືປະຊາຊົນທີ່ພຣະອົງໄດ້ຊົງໄຖ່ໄວ້
ພຣະອົງໄດ້ຊົງພາເຂົາມາເຖິງທີ່ສັກສິດຂອງພຣະອົງ
ດ້ວຍເດຊະນຸພາບຂອງພຣະອົງ.
14 ຊົນຊາດທັງຫລາຍໄດ້ຍິນແລ້ວກໍສະທ້ານຢ້ານກົວ
ຊົນຊາດຟີລິດສະເຕຍໄດ້ເຈັບປວດເໝືອນເຈັບທ້ອງອອກລູກ.
15 ພວກເຈົ້ານາຍໃນເມືອງເອໂດມກໍຢ້ານກົວ
ຜູ້ມີອຳນາດໃນເມືອງໂມອາບກໍຕົວສັ່ນ
ທຸກໆຄົນໃນປະເທດການາອານໄດ້ໝົດກຳລັງໃຈ.
16 ຄວາມຕົກໃຈໄດ້ເກີດຂຶ້ນໃນໃຈຂອງເຂົາ

ເນື່ອງດ້ວຍອຳນາດຂອງພຣະອົງ
ໂອພຣະຜູ້ເປັນເຈົ້າພວກເຂົາຢືນນິ້ງຢູ່ເໝືອນກ້ອນຫີນ
ຈົນໄພ່ພົນຂອງພຣະອົງໄດ້ຜ່ານພົ້ນໄປ
ຈົນປະຊາຊົນທີ່ພຣະອົງຊົງໄຖ່ໄວ້ໄດ້ຜ່ານພົ້ນໄປ.
17 ໂອພຣະຜູ້ເປັນເຈົ້າ
ພຣະອົງຊົງນຳເຂົາມາຮັກສາໄວ້ເທິງພູຂອງພຣະອົງ
ຊຶ່ງພຣະອົງໄດ້ຊົງສ້າງໄວ້ເປັນບ່ອນສະຖິດຂອງພຣະອົງ
ໂອພຣະຜູ້ເປັນເຈົ້າພຣະວິຫານເປັນບ່ອນພຣະອົງເອງຊົງສ້າງ.
18 ພຣະຜູ້ເປັນເຈົ້າຈະຊົງເປັນເຈົ້າຊີວິດຕະຫລອດໄປເປັນນິດ."

19ເພາະເມື່ອຝູງມ້າພ້ອມທັງລົດຮົບ ແລະ ຄົນຂັບລົດຂອງຟາຣາໂອໄດ້ລົງໄປໃນທະເລ
ພຣະຜູ້ເປັນເຈົ້າກໍຊົງໃຫ້ນ້ຳທະເລໄຫລຄືນມາຖ້ວມ ແຕ່ຊາວ ອິສຣາເອນໄດ້ຍ່າງໄປເທິງດິນ
ກາງທະເລນັ້ນ.

20ນາງ ມີຣິອາມ ຜູ້ປະກາດພຣະທຳ ຊຶ່ງເປັນເອື້ອຍຂອງອາໂຣນໄດ້ຖືກອງໂທນ ແລະ ຜູ້ຍິງ
ທັງໝົດກໍຍ່າງຟ້ອນລຳຕິດຕາມສຽງກອງໄປ. 21ນາງ ມີຣິອາມ ໄດ້ຮ້ອງເພງອອກໜ້າວ່າ, "ຈົ່ງ
ຮ້ອງເພງສັນລະເສີນພຣະຜູ້ເປັນເຈົ້າ ເພາະພຣະອົງຊົງມີໄຊຊະ ນະຢ່າງໃຫຍ່ຫລວງ ພຣະອົງ
ຊົງຊຸກມ້າ ແລະ ຄົນຂັບລົດລົງໃນທະເລ.

## ນ້ຳຂົມທີ່ ມາຣາ

22ຕໍ່ມາ ໂມເຊ ໄດ້ໃຫ້ຊາວ ອິສຣາເອນ ຕຽມຕົວອອກຈາກທະເລແດງໄປຍັງຖິ່ນກັນດານ ຊູເຣ
ພວກເຂົາໄດ້ພາກັນຍ່າງຢູ່ຖິ່ນກັນດານເຖິງສາມມື້ກໍບໍ່ພົບນ້ຳ. 23ຄັນແລ້ວ ເຂົາກໍມາເຖິງບໍ່ນ້ຳຂົມ
ແຫ່ງໜຶ່ງ ນ້ຳນັ້ນໄດ້ຂົມຫລາຍຈົນເຂົາດື່ມບໍ່ໄດ້ ເຂົາຈຶ່ງເອີ້ນຊື່ນ້ຳນັ້ນວ່າ ມາຣາ.

24ປະຊາຊົນ ອິສຣາເອນ ໄດ້ພາກັນຈົ່ມຮ້າຍ ໂມເຊ ແລະ ຖາມວ່າ, "ພວກເຮົາຈະດື່ມຫຍັງ?"
25ໂມເຊ ຈຶ່ງອ້ອນວອນດ້ວຍໃຈຮ້ອນຮົນຕໍ່ພຣະຜູ້ເປັນເຈົ້າ ແລ້ວພຣະອົງໄດ້ຊີ້ໃຫ້ ໂມເຊ ເຫັນ
ທ່ອນໄມ້ອັນໜຶ່ງ ໂມເຊ ຈຶ່ງຈັບໄມ້ນັ້ນຖິ້ມລົງໃນນ້ຳ ນ້ຳກໍຈືດ ບໍ່ຂົມຄືເກົ່າ. ໃນທີ່ນັ້ນ ພຣະຜູ້-
ເປັນເຈົ້າໄດ້ຊົງປະທານກົດບັນ ຍັດໃຫ້ແກ່ພວກເຂົາ ແລະ ໄດ້ຊົງທົດລອງໃຈເຂົາຢູ່ທີ່ນັ້ນດ້ວຍ.
26ພຣະຜູ້ເປັນເຈົ້າຊົງກ່າວວ່າ, "ຖ້າພວກເຈົ້າເຊື່ອຟັງເຮົາຜູ້ເປັນພຣະຜູ້ເປັນເຈົ້າຂອງເຈົ້າ ຈົ່ງ
ເຮັດໃນສິ່ງທີ່ເຮົາເຫັນວ່າຖືກຕ້ອງ ເອົາໃຈໃສ່ເຮັດຕາມພຣະບັນຍັດຂອງເຮົາ ແລະ ປະຕິບັດ
ຕາມກົດບັນຍັດຂອງເຮົາທຸກຢ່າງ ເຮົາກໍຈະບໍ່ລົງໂທດພວກເຈົ້າດ້ວຍໂຣກໄພໄຂ້ເຈັບຕ່າງໆ
ເໝືອນຢ່າງທີ່ເຮົາໄດ້ນຳມາລົງໂທດຊາວເອຢິບນັ້ນ ເຮົານີ້ແຫລະ ເປັນຜູ້ປິ່ນປົວພວກເຈົ້າໃຫ້ດີ."

27ຕໍ່ໄປພວກອິສຣາເອນກໍມາເຖິງ ເອລິມ ບ່ອນມີນ້ຳຄຳສິບສອງບໍ່ ແລະ ມີຕົ້ນອິນທະພະ
ລຳເຈັດສິບຕົ້ນ ແລ້ວຕັ້ງຄ້າຍພັກເຊົາຢູ່ໃກ້ນ້ຳທີ່ນັ້ນ.

# ບົດທີ 16

## ມານາ ແລະນົກຂຸ້ມ

1ແລ້ວຊຸມນຸມຊົນ ອິສຣາເອນ ທັງໝົດ ໄດ້ອອກຈາກຄ້າຍພັກ ເອລີມ ແລະ ໃນວັນທີສິບຫ້າ
ຂອງ ເດືອນທີສອງ ຄືນັບຕັ້ງແຕ່ເວລາອອກຈາກ ເອຢິບ ແລ້ວ ພວກເຂົາທັງໝົດໄດ້ມາເຖິງຖິ່ນ
ກັນດານຊິນ ຊຶ່ງຢູ່ລະຫວ່າງ ເອລີມ ກັບພູຊີນາຍ. 2ເມື່ອຢູ່ໃນຖິ່ນກັນດານ ພວກເຂົາໄດ້ພາກັນ
ຈົ່ມຮ້າຍ ໂມເຊ ແລະ ອາໂຣນ. 3ພວກເຂົາເວົ້າວ່າ, “ພວກຂ້ານ້ອຍພໍໃຈໃຫ້ ພຣະຜູ້ເປັນເຈົ້າ ຂ້າ
ຕາຍຢູ່ ເອຢິບ ບ່ອນທີ່ໄດ້ນັ່ງກິນເຂົ້າປາອາຫານອີ່ມຕາມຄວາມຕ້ອງການ ແຕ່ນີ້ທ່ານໄດ້ນຳພວກ
ຂ້ານ້ອຍທັງໝົດອອກມາອຶດຢາກຕາຍຢູ່ໃນຖິ່ນກັນດານ.”
4ຕໍ່ມາ ພຣະຜູ້ເປັນເຈົ້າ ຊົງກ່າວກັບ ໂມເຊ ວ່າ, “ບັດນີ້ເຮົາຈະເຮັດໃຫ້ອາຫານຕົກລົງມາຈາກ
ທ້ອງຟ້າດັ່ງຫ່າຝົນສຳລັບພວກເຈົ້າ ໃຫ້ປະຊາຊົນໄປຊອກເກັບເອົາທຸກມື້ ໃຫ້ເກັບເອົາພໍດີກິນ
ສຳລັບວັນໜຶ່ງ ທີ່ໃຫ້ເຮັດດັ່ງນີ້ ກໍເພື່ອເຮົາຈະໄດ້ທົດລອງເບິ່ງໃຈເຂົາວ່າ ເຂົາຈະເຮັດຕາມຄຳ
ບອກສອນຂອງເຮົາຫລືບໍ່. 5ໃນມື້ທີຫົກໃຫ້ເຂົາເກັບເອົາຫລາຍກວ່າມື້ກ່ອນໜຶ່ງເທົ່າ ແລ້ວໃຫ້ຈັດ
ຕຽມເຮັດອາຫານໄວ້.”
6ໂມເຊກັບ ອາໂຣນ ຈຶ່ງບອກປະຊາຊົນ ອິສຣາເອນ ທັງປວງວ່າ, “ໃນຕອນຄ່ຳນີ້ພວກເຈົ້າທັງ-
ຫລາຍຈະໄດ້ຮູ້ວ່າ ແມ່ນ ພຣະຜູ້ເປັນເຈົ້າ ຊົງນຳພວກເຈົ້າອອກຈາກ ເອຢິບ. 7ແລະ ໃນຕອນເຊົ້າ
ພວກເຈົ້າຈະໄດ້ເຫັນພຣະລັດສະໝີຄວາມຍິ່ງໃຫຍ່ຂອງ ພຣະຜູ້ເປັນເຈົ້າ ພຣະອົງຊົງໄດ້ຍິນຄຳ
ຈົ່ມຮ້າຍຂອງພວກເຈົ້າທີ່ມີຕໍ່ພຣະອົງແລ້ວ ແມ່ນແທ້ພວກເຈົ້າໄດ້ຈົ່ມຮ້າຍພຣະອົງ ເພາະເຮົາທັງ
ສອງນັ້ນບໍ່ສຳຄັນຫຍັງ.”
8ໂມເຊໄດ້ເວົ້າຕໍ່ໄປວ່າ, “ແມ່ນ ພຣະຜູ້ເປັນເຈົ້າ ຈະໃຫ້ພວກເຈົ້າມີຊີ້ນກິນຕອນແລງ ແລະ ມີ
ເຂົ້າກິນຢ່າງບໍລິບູນໃນຕອນເຊົ້າ ເພາະພຣະອົງຊົງໄດ້ຍິນພວກເຈົ້າຈົ່ມຮ້າຍພຣະອົງແລ້ວ ພວກ
ເຈົ້າບໍ່ໄດ້ຈົ່ມຮ້າຍເຮົາ ແຕ່ໄດ້ຈົ່ມຮ້າຍ ພຣະຜູ້ເປັນເຈົ້າ ພວກເຮົາບໍ່ສຳຄັນດອກ.”
9ຕໍ່ມາ ໂມເຊ ໄດ້ເວົ້າກັບ ອາໂຣນ ວ່າ, “ຈົ່ງບອກຊຸມນຸມຊົນ ອິສຣາເອນ ເຂົ້າມາຢືນຢູ່ຊ້ອງພຣະ-
ພັກ ພຣະຜູ້ເປັນເຈົ້າ ເພາະວ່າພຣະອົງຊົງໄດ້ຍິນຄຳຈົ່ມຮ້າຍຂອງພວກເຂົາແລ້ວ.”
10ໃນຂະນະທີ່ ອາໂຣນ ກຳລັງເວົ້າກັບຊຸມນຸມຊົນ ອິສຣາເອນ ຢູ່ນັ້ນ ເຂົາທັງຫລາຍຕ່າງກໍພາ-
ກັນຫັນໜ້າຫລຽວໄປທາງຖິ່ນກັນດານ ທັນໃດນັ້ນ ໄດ້ເກີດມີຄວາມຍິ່ງໃຫຍ່ຂອງ ພຣະຜູ້ເປັນເຈົ້າ
ປະກົດຂຶ້ນໃນ ເມກ. 11-12ແລ້ວ ພຣະຜູ້ເປັນເຈົ້າ ຊົງກ່າວກັບ ໂມເຊ ວ່າ, “ເຮົາໄດ້ຍິນຄຳຈົ່ມຮ້າຍ
ຂອງຊາວ ອິສຣາເອນ ແລ້ວ ເຈົ້າຈົ່ງບອກເຂົາວ່າ ພວກເຈົ້າຈະໄດ້ກິນຊີ້ນໃນເວລາຄ່ຳມືດ ແລະ
ຈະໄດ້ກິນເຂົ້າອີ່ມໃນເວລາເຊົ້າ ແລ້ວເຈົ້າທັງ ຫລາຍຈະໄດ້ຮູ້ວ່າ ເຮົາຄື ພຣະຜູ້ເປັນເຈົ້າ ຂອງ
ພວກເຈົ້າ.”
13-14ຄັນເຖິງເວລາຄ່ຳກໍມີນົກຂຸ້ມບິນມາເຕັມຄ້າຍພັກເຊົາ ແລະ ໃນຕອນເຊົ້າກໍມີນ້ຳໝອກປົກ
ຫຸ້ມຢູ່ຮອບຄ້າຍ ເມື່ອນ້ຳໝອກເຫືອຍໄປໝົດແລ້ວ ໄດ້ມີສິ່ງໜຶ່ງຢູ່ເທິງດິນໃນຖິ່ນກັນດານ ສິ່ງນັ້ນ
ເປັນແຜ່ນບາງໆ ເໝືອນນ້ຳ ໝອກກ້າມ. 15ເມື່ອຊາວ ອິສຣາເອນ ເຫັນ ກໍບໍ່ຮູ້ຈັກວ່າແມ່ນຫຍັງ
ພວກເຂົາຈຶ່ງຖາມກັນ ແລະ ກັນວ່າ, “ອັນນີ້ແມ່ນຫຍັງ?” ໂມເຊໄດ້ບອກເຂົາວ່າ, “ອັນນີ້ແມ່ນ

ເຂົ້າທີ່ພຣະຜູ້ເປັນເຈົ້າຊົງປະທານໃຫ້ພວກເຈົ້າກິນ.
[16]ພຣະຜູ້ເປັນເຈົ້າຊົງສັ່ງດັ່ງນີ້ວ່າ ທຸກໆຄົນຈົ່ງເກັບເອົາຕາມທີ່ຕົນຈະກິນໄດ້ໝົດ ຈົ່ງເກັບ
ເອົາຄົນລະປະມານສອງກິໂລ ໃຫ້ເກັບຕາມຈຳນວນຄົນທີ່ມີຢູ່ໃນຕູບຜ້າເຕັນຂອງຕົນ.” [17]ປະຊາ-
ຊົນອິສຣາເອນກໍໄດ້ເຮັດຕາມ ລາງຄົນໄດ້ເກັບເອົາຫລາຍລາງຄົນໄດ້ເກັບເອົາໜ້ອຍ. [18]ແຕ່ເມື່ອ
ພວກເຂົາຊັ່ງເບິ່ງ ຄົນທີ່ເກັບເອົາຫລາຍກໍບໍ່ມີຫລາຍ ແລະ ຄົນທີ່ເກັບເອົາໜ້ອຍກໍບໍ່ມີໜ້ອຍ ທຸກ
ຄົນຈຶ່ງເກັບໄດ້ພໍດີກັບກິນອີ່ມ.
[19]ໂມເຊໄດ້ບອກວ່າ, “ຢ່າໃຫ້ຜູ້ໃດເກັບມ້ຽນໄວ້ຈົນຮອດມື້ອື່ນ.” [20]ແຕ່ມີລາງຄົນບໍ່ເຊື່ອຟັງໂມ-
ເຊ ຄືເຂົາໄດ້ເອົາສ່ວນໜຶ່ງມ້ຽນໄວ້ຈົນຮອດມື້ອື່ນ ພໍຮອດມື້ເຊົ້າອາຫານນັ້ນກໍເປັນໜອນ ແລະ
ບູດເນົ່າ ໂມເຊຈຶ່ງຮ້າຍພວກເຂົາ. [21]ດັ່ງນັ້ນ ພວກເຂົາຈຶ່ງຫາເກັບເອົາທຸກເຊົ້າເທົ່າທີ່ຕົນພໍຈະກິນ
ອີ່ມ ແຕ່ພໍແດດຮ້ອນຂຶ້ນ ອາຫານນັ້ນກໍລະລາຍຫາຍໄປ. [22]ຕໍ່ມາໃນວັນທີຫົກ ເຂົາໄດ້ເກັບເອົາ
ອາຫານນັ້ນສອງເທົ່າ ຄືຄົນລະປະມານສີ່ກິໂລ ແລ້ວບັນດາຫົວໜ້າຊຸມນຸມຊົນອິສຣາເອນໄດ້ມາ
ລາຍງານເລື່ອງນີ້ຕໍ່ໂມເຊ. [23]ໂມເຊໄດ້ບອກເຂົາວ່າ, “ພຣະຜູ້ເປັນເຈົ້າຊົງມີພຣະດຳລັດດັ່ງນີ້:
ມື້ອື່ນແມ່ນວັນສິນ ຄືມື້ບໍລິສຸດຂອງພຣະຜູ້ເປັນເຈົ້າ ສະນັ້ນ ມີອັນໃດປີ້ງກໍໃຫ້ປີ້ງເສຍ ມີອັນໃດ
ຕົ້ມກໍຕົ້ມເສຍ ສິ່ງທີ່ເຫລືອຈົ່ງເອົາມ້ຽນໄວ້ຮອດມື້ອື່ນ.”
[24]ພວກເຂົາຈຶ່ງເຮັດຕາມໂມເຊສັ່ງ ຄືໄດ້ເກັບອາຫານທີ່ເຫລືອມ້ຽນໄວ້ຈົນຮອດມື້ອື່ນ ອາຫານ
ນັ້ນບໍ່ໄດ້ບູດເໝັນເປັນໜອນເລີຍ. [25]ຕໍ່ໄປໂມເຊໄດ້ບອກວ່າ, “ມື້ອື່ນຈົ່ງກິນອາຫານນັ້ນເສຍ
ເພາະວ່າມື້ນີ້ເປັນວັນສິນຂອງພຣະຜູ້ເປັນເຈົ້າ ແລະ ພວກທ່ານຈະຫາອາຫານໃດໆ ບໍ່ໄດ້ອີກ
ໃນທີ່ທົ່ວໄປ. [26]ຈົ່ງໄປຫາເກັບເອົາເສຍຫົກມື້ ແຕ່ໃນມື້ທີເຈັດຊຶ່ງເປັນວັນສິນນັ້ນຈະບໍ່ມີອາຫານ
ເລີຍ.”
[27]ຄັນແລ້ວ ໃນມື້ທີເຈັດໄດ້ມີລາງຄົນອອກໄປຫາເອົາອາຫານນັ້ນແຕ່ເຂົາກໍຫາບໍ່ໄດ້. [28]ພຣະ-
ຜູ້ເປັນເຈົ້າຈຶ່ງຊົງກ່າວຕໍ່ໂມເຊວ່າ, “ພວກເຈົ້າຈະຂັດຂືນຂໍ້ບັນຍັດ ແລະ ກົດໝາຍຂອງເຮົາຢູ່
ເຖິງປານໃດ? ຈົ່ງຈື່ໄວ້ວ່າ ເຮົາຄືພຣະຜູ້ເປັນເຈົ້າໄດ້ໃຫ້ວັນສິນແກ່ພວກເຈົ້າ. [29]ຈົ່ງຈື່ໄວ້ວ່າ
ເຮົາຄືພຣະຜູ້ເປັນເຈົ້າໄດ້ໃຫ້ວັນສິນແກ່ພວກເຈົ້າ. ເຫດສັນນັ້ນ ໃນມື້ທີຫົກ ເຮົາຈຶ່ງໄດ້ປະທານ
ອາ ຫານໃຫ້ພໍກິນໄດ້ສອງມື້ ໃນມື້ທີເຈັດ ທຸກຄົນຕ້ອງຢູ່ກັບທີ່ ບໍ່ໃຫ້ມີຜູ້ໃດອອກຈາກບ້ານເຮືອນ
ຂອງຕົນ.” [30]ດ້ວຍເຫດນີ້ ຄົນທັງປວງຈຶ່ງບໍ່ເຮັດວຽກໃນມື້ຖ້ວນເຈັດ.
[31]ປະຊາຊົນອິສຣາເອນໄດ້ເອີ້ນຊື່ອາຫານນັ້ນວ່າມານາ ອາຫານນີ້ເປັນເມັດຂາວໆ ຄືໃນ
ຜັກຊີ ມີລົດເໝືອນເຂົ້າໜົມແຜ່ນປະສົມນໍ້າເຜິ້ງ.
[32]ໂມເຊໄດ້ເວົ້າວ່າ, “ພຣະຜູ້ເປັນເຈົ້າຊົງສັ່ງດັ່ງນີ້ວ່າ ຈົ່ງຜອງເອົາມານາສອງກິໂລເກັບໄວ້
ຕະຫລອດຊົ່ວເຊື້ອສາຍຂອງພວກເຈົ້າ ເພື່ອເຂົາທັງຫລາຍຈະໄດ້ເຫັນອາຫານທີ່ເຮົາໄດ້ໃຫ້ເຈົ້າ
ກິນໃນຖິ່ນກັນດານ ເມື່ອຄາວເຮົາໄດ້ນຳພວກເຈົ້າອອກຈາກເອຢິບນັ້ນ.” [33]ໂມເຊໄດ້ບອກອາ-
ໂຣນວ່າ, “ຈົ່ງຜອງມານາ ໜຶ່ງໂອເມີ[ກ] ໃສ່ໄຫໄວ້ສຳລັບເຊື້ອສາຍຂອງເຈົ້າ ແລ້ວເອົາໄປໄວ້
ໃນເຕັນສັກສິດຊ້ອງພຣະພັກພຣະຜູ້ເປັນເຈົ້າ.” [34]ອາໂຣນຈຶ່ງໄດ້ວາງມານານັ້ນໄວ້ຕໍ່ໜ້າຫີບ

[ກ]ປະມານສອງກິໂລ

ພຣະສັນຍາ ເພື່ອເກັບຮັກສາໄວ້ຕາມພຣະຜູ້ເປັນເຈົ້າຊົງສັ່ງ ໂມເຊ.
[35]ປະຊາຊົນ ອິສຣາເອນ ໄດ້ກິນ ມານາ ເປັນອາຫານຢູ່ສີ່ສິບປີ ຈົນພວກເຂົາໄດ້ມາເຖິງແຜ່ນ-
ດິນບ່ອນມີຄົນຢູ່ ຄືມາຮອດຊາຍແດນປະເທດ ການາອານ. [36](ໜຶ່ງໂອເມີເທົ່າກັບໜຶ່ງໃນສິບຂອງ
ເອຟາ).

## ບົດທີ 17

### ນໍ້າອອກມາຈາກຫີນ

[1]ຊຸມນຸມຊົນ ອິສຣາເອນທັງໝົດ ໄດ້ຍ້າຍອອກຈາກຖິ່ນກັນດານຊິນ ໄປຕັ້ງຄ້າຍຢູ່ເປັນໄລ-
ຍະໆ ຕາມພຣະບັນຊາຂອງພຣະຜູ້ເປັນເຈົ້າ ພວກເຂົາໄດ້ຕັ້ງຄ້າຍພັກເຊົາຢູ່ທີ່ເຣຟີດີມ ແຕ່ໃນ
ທີ່ນີ້ບໍ່ມີນໍ້າໃຫ້ປະຊາຊົນດື່ມ. [2]ພວກເຂົາຈຶ່ງຜິດຖຽງກັບໂມເຊ ແລະ ເວົ້າວ່າ, "ໃຫ້ພວກຂ້ານ້ອຍ
ດື່ມນໍ້າແດ່" ໂມເຊໄດ້ຕອບວ່າ, "ພວກເຈົ້າຫາເລື່ອງຜິດຖຽງກັບຂ້ອຍເຮັດຫຍັງ? ເປັນຫຍັງຈຶ່ງ
ບັງອາດລອງດີກັບພຣະຜູ້ເປັນເຈົ້າ?" [3]ປະຊາຊົນໄດ້ຫິວນໍ້າຫລາຍຂຶ້ນຈຶ່ງຈົ່ມຮ້າຍໃສ່ໂມເຊ ວ່າ,
"ເປັນຫຍັງທ່ານຈຶ່ງພາພວກຂ້ານ້ອຍອອກມາຈາກ ເອຢິບ? ຮູ້ບໍວ່າ ພວກຂ້ານ້ອຍ ທັງເດັກນ້ອຍ
ແລະ ຝູງສັດຫິວນໍ້າຈະຕາຍແລ້ວ?"
[4]ໂມເຊຈຶ່ງອ້ອນວອນຕໍ່ພຣະຜູ້ເປັນເຈົ້າດ້ວຍຄວາມຮ້ອນຮົນວ່າ, "ຂ້ານ້ອຍຈະເຮັດແນວໃດ
ກັບປະຊາຊົນເຫລົ່ານີ້ ພວກເຂົາເກືອບຈະເອົາຫີນຄວ່າງໃສ່ຂ້ານ້ອຍແລ້ວ." [5]ພຣະຜູ້ເປັນເຈົ້າຊົງ
ຕອບໂມເຊວ່າ, "ເຈົ້າຈົ່ງຍ່າງໄປກ່ອນປະຊາຊົນເຫລົ່ານັ້ນ ໃຫ້ເອົາຫົວໜ້າບາງຄົນຂອງຊາວອິ-
ສຣາເອນໄປດ້ວຍ ໄມ້ເທົ້າທີ່ເຈົ້າໃຊ້ຕີແມ່ນໍ້າກໍໃຫ້ຖືໄປ ໃຫ້ຮີບອອກເດີນທາງໄປ. [6]ເຮົາຈະຢືນຢູ່
ຕໍ່ໜ້າເຈົ້າເທິງໂງ່ນຫີນທີ່ໂຮເຣັບ ເຈົ້າຈົ່ງຕີຫີນນັ້ນ ແລ້ວນໍ້າຈະໄຫລອອກມາໃຫ້ປະຊາຊົນດື່ມ
ໄດ້" ໂມເຊຈຶ່ງເຮັດດັ່ງນັ້ນຕໍ່ໜ້າພວກຫົວໜ້າຂອງຊາວອິສຣາເອນ.
[7]ສະຖານທີ່ນັ້ນຈຶ່ງມີຊື່ວ່າມາສາ ຫລື ບາງຄົນເອີ້ນວ່າເມຣິບາ ເພາະຊາວອິສຣາເອນໄດ້ຜິດ
ຖຽງກັນ ແລະ ລອງດີກັບພຣະຜູ້ເປັນເຈົ້າຢູ່ທີ່ນັ້ນ ໂດຍເວົ້າວ່າ, "ພຣະຜູ້ເປັນເຈົ້າຊົງສະຖິດຢູ່
ກັບພວກເຮົາຫລືບໍ່?"

### ເສິກສົງຄາມກັບຊາວ ອາມາເລັກ

[8-9]ຊາວອາມາເລັກໄດ້ຍົກທັບມາຕີຊາວ ອິສຣາເອນທີ່ເຣຟີດີມ ໂມເຊຈຶ່ງເວົ້າກັບ ໂຢຊວຍ
ວ່າ, "ຈົ່ງໂຮມກຳລັງຄົນຂອງເຮົາອອກໄປສູ້ຮົບກັບຊາວອາມາເລັກໃນມື້ອື່ນນີ້ ເຮົາຈະຖືໄມ້ເທົ້າ
ທີ່ພຣະເຈົ້າປະທານໃຫ້ຢືນຢູ່ເທິງຈອມພູ."
[10]ໂຢຊວຍໄດ້ເຮັດຕາມໂມເຊສັ່ງ ຄືໄດ້ສູ້ຮົບກັບພວກອາມາເລັກ ສ່ວນໂມເຊ ອາໂຣນ ແລະ
ຮູເຣໄດ້ຂຶ້ນໄປເທິງຈອມພູນັ້ນ. [11]ເມື່ອໃດໂມເຊຍົກແຂນຂຶ້ນ ຊາວອິສຣາເອນກໍເປັນຝ່າຍໄດ້
ປຽບ ແຕ່ພໍໂມເຊເອົາແຂນລົງ ຝ່າຍ ອາມາເລັກກໍເລີ້ມໄດ້ປຽບ. [12]ເມື່ອໂມເຊເມື່ອຍແຂນອາ-
ໂຣນກັບຮູເຣກໍນຳກ້ອນຫີນມາໃຫ້ໂມເຊນັ່ງ ແລ້ວເຂົາທັງສອງກໍຢືນຈັບແຂນໂມເຊຍົກຂຶ້ນຄົນ
ລະຂ້າງ ແຂນຂອງໂມເຊຈຶ່ງຍົກຢູ່ຈົນຕາເວັນຕົກດິນ. [13]ໂຢຊວຍຈຶ່ງຊະນະປະຊາຊົນຂອງອາ-
ມາເລັກໄດ້ທັງໝົດ."

14ຕໍ່ມາ ພຣະຜູ້ເປັນເຈົ້າຊົງບອກໂມເຊວ່າ, "ຈົ່ງຂຽນເລື່ອງທີ່ເກີດຂຶ້ນນີ້ໄວ້ໃນປື້ມ ເພື່ອຈະ
ໄດ້ລະນຶກເຖິງ ແລະ ຈົ່ງເລົ່າໃຫ້ໂຢຊວຍຟັງວ່າ ເຮົາຈະເຮັດໃຫ້ຊື່ສຽງຂອງອາມາເລັກໝົດສິ້ນ
ໄປ." 15ແລ້ວໂມເຊໄດ້ສ້າງແທ່ນບູຊາອັນໜຶ່ງຂຶ້ນ ເອີ້ນແທ່ນນັ້ນວ່າ ພຣະຜູ້ເປັນເຈົ້າຊົງເປັນ
ທຸງໄຊຂອງຂ້ອຍ. 16ເພິ່ນສັ່ງວ່າ "ຈົ່ງຍົກສູງທຸງໄຊຂອງພຣະຜູ້ເປັນເຈົ້າ! ພຣະຜູ້ເປັນເຈົ້າຈະສູ້
ຮົບກັບຊາວອາມາເລັກຕະຫລອດໄປ!"

# ບົດທີ 18

## ພໍ່ເຖົ້າຂອງໂມເຊມາເຖິງຊົນຊາດອິສຣາເອນ

1ເມື່ອເຢດໂຣ ປະໂລຫິດແຫ່ງມີດີອານ ພໍ່ ເຖົ້າຂອງໂມເຊ ໄດ້ຍິນເຖິງກິດຈະການທັງ-
ຫລາຍທີ່ພຣະເຈົ້າຊົງ ກະທຳເພື່ອໂມເຊແລະອິສຣາເອນ ໄພ່ພົນຂອງພຣະອົງວ່າ ພຣະຜູ້-
ເປັນເຈົ້າຊົງນຳ ອິສຣາເອນອອກຈາກເອຢິບ
2ເຢດໂຣພໍ່ເຖົ້າຂອງ ໂມເຊຈຶ່ງພາຊິບໂປຣາ ເມຍຂອງໂມເຊຊຶ່ງໂມເຊໄດ້ສົ່ງກັບໄປແຕ່ຄາວ
ກ່ອນນັ້ນ 3ພ້ອມກັບລູກຊາຍທັງສອງຄົນຂອງນາງ ຄົນໜຶ່ງຊື່ ເກໂຊມ ເພາະໂມເຊກ່າວວ່າ
"ຂ້າພະເຈົ້າເປັນຄົນຕ່າງດ້າວອາໄສຢູ່ຕ່າງປະເທດ" 4ອີກຄົນໜຶ່ງຊື່ເອລີເອເຊ ເພາະທ່ານກ່າວ
ວ່າ "ພຣະເຈົ້າຂອງພໍ່ຂ້າພະເຈົ້າເປັນຜູ້ອຸປະຖຳຂ້າພະເຈົ້າ ແລະ ຊົງໃຫ້ຂ້າພະເຈົ້າລອດພົ້ນຈາກ
ແສງດາບຂອງ ຟາຣາໂອ"
5ເຢດໂຣພໍ່ເຖົ້າຂອງ ໂມເຊໄດ້ພາເມຍ ແລະ ລູກຊາຍທັງສອງຄົນນັ້ນມາຫາໂມເຊຢູ່ໃນຖິ່ນ
ແຫ້ງແລ້ງກັນດານບ່ອນທີ່ໂມເຊຕັ້ງຄ້າຍຢູ່ທີ່ພູເຂົາຂອງພຣະເຈົ້າ 6ເພິ່ນບອກໂມເຊວ່າ "ເຮົາຄື
ເຢດໂຣພໍ່ເຖົ້າຂອງເຈົ້າ ພາເມຍກັບລູກຊາຍທັງສອງຂອງນາງມາຫາເຈົ້າ" 7ໂມເຊອອກໄປ
ຕ້ອນຮັບພໍ່ເຖົ້າຂາບລົງ ແລະ ຈູບເພິ່ນ ທັງສອງຄົນໄດ້ສອບຖາມເຖິງຄວາມທຸກສຸກ ຊຶ່ງກັນ
ແລະກັນ ແລ້ວພາກັນເຂົ້າໄປໃນເຕັນ 8ໂມເຊເລົ່າໃຫ້ພໍ່ເຖົ້າຟັງເຖິງເຫດການທຸກປະການຊຶ່ງ
ພຣະຜູ້ເປັນເຈົ້າໄດ້ຊົງກະທຳກັບຟາຣາໂອ ແລະ ແກ່ ຊາວເອຢິບເພາະເຫັນແກ່ພວກອິສຣາ-
ເອນ ພ້ອມທັງຄວາມທຸກຍາກລຳບາກທັງປວງຊຶ່ງເກີດຂຶ້ນກັບຄົນ ອິສຣາເອນໃນລະຫວ່າງການ
ເດີນທາງ ແລະພຣະຜູ້ເປັນເຈົ້າໄດ້ຊົງຊ່ວຍພວກເຂົາໃຫ້ພົ້ນໄພຢ່າງໃດ
9ເຢດໂຣກໍມີຄວາມຍິນດີທີ່ໄດ້ຮູ້ເຖິງພຣະກະລຸນາທັງຫລາຍ ຊຶ່ງພຣະຜູ້ເປັນເຈົ້າໄດ້ສະແດງ
ແກ່ຄົນ ອິສຣາເອນ ທີ່ພຣະອົງໄດ້ຊ່ວຍພວກເຂົາໃຫ້ລອດພົ້ນຈາກເງື້ອມມືຊາວເອຢິບ 10ເຢດ-
ໂຣຈຶ່ງກ່າວວ່າ "ສາທຸການແດ່ພຣະຜູ້ເປັນເຈົ້າຜູ້ຊົງຊ່ວຍເຈົ້າທັງຫລາຍໃຫ້ລອດພົ້ນຈາກເງື້ອມມື
ຊາວເອຢິບ ແລະ ຈາກເງື້ອມມືຂອງຟາຣາໂອ ແລະ ຊ່ວຍໄພ່ພົນໃຫ້ພົ້ນຈາກມືຂອງຊາວເອ-
ຢິບ 11ບັດນີ້ເຮົາຮູ້ວ່າ ພຣະຜູ້ເປັນເຈົ້າຊົງເປັນໃຫຍ່ກວ່າພະທັງປວງ ໃຫຍ່ກວ່າພະເຫລົ່ານັ້ນທີ່
ໄດ້ກະທຳຕໍ່ຊົນຊາດ ອິສຣາເອນຢ່າງທະນົງອົງອາດ" 12ເຢດໂຣພໍ່ເຖົ້າຂອງໂມເຊກໍນຳເຄື່ອງ
ເຜົາບູຊາ ແລະ ເຄື່ອງບູຊາອື່ນໆຖວາຍແກ່ພຣະເຈົ້າ ຝ່າຍ ອາໂຣນ ກັບບັນດາຫົວໜ້າແຫ່ງ
ອິສຣາເອນກໍມາຮ່ວມຮັບປະທານລ້ຽງກັບພໍ່ເຖົ້າຂອງໂມເຊສະເພາະພຣະພັກພຣະເຈົ້າ
13ໃນມື້ຕໍ່ມາ ໂມເຊ ອອກມານັ່ງພິພາກສາຄວາມໃຫ້ໄພ່ພົນ ໄພ່ພົນກໍຢືນອ້ອມໂມເຊຕັ້ງ ແຕ່

ເຊົ້າຈົນຄ່ຳ 14ເມື່ອພໍ່ເຖົ້າຂອງໂມເຊເຫັນງານທັງປວງທີ່ໂມເຊ ກະທຳເພື່ອໄພ່ພົນເຊັ່ນນັ້ນ ຈຶ່ງ
ກ່າວວ່າ "ເຈົ້າໃຊ້ວິທີນີ້ບໍປະຕິບັດກັບໄພ່ພົນ? ເຫດໃດ ເຈົ້າຈຶ່ງນັ່ງເຮັດວຽກຢູ່ແຕ່ຜູ້ດຽວ ແລະ
ໄພ່ພົນທັງປວງກໍຢືນອ້ອມເຈົ້າຕັ້ງແຕ່ເຊົ້າຈົນຄ່ຳ"

15ໂມເຊຈຶ່ງຕອບພໍ່ເຖົ້າວ່າ "ເພາະໄພ່ພົນມາຫາຂ້ອຍ ເພື່ອຂໍໃຫ້ທູນຖາມພຣະເຈົ້າ 16ເມື່ອ
ພວກເຂົາມີການໂຕ້ຖຽງກັນກໍມາຫາຂ້ອຍ ຂ້ອຍກໍຕັດສິນຄວາມລະຫວ່າງເຂົາກັບເພື່ອນບ້ານ
ສອນເຂົາໃຫ້ຮູ້ຈັກກົດເກນຂອງພຣະເຈົ້າ ແລະ ກົດໝາຍຂອງພຣະອົງ"

17ຝ່າຍພໍ່ເຖົ້າຂອງໂມເຊຈຶ່ງກ່າວແກ່ເພິ່ນວ່າ "ເຈົ້າເຮັດຢ່າງນີ້ແມ່ນບໍ່ດີ 18ທັງເຈົ້າ ແລະ ໄພ່
ພົນທີ່ມາຫາເຈົ້ານັ້ນຈະອ່ອນໃຈ ເພາະພາລະອັນໜັກນີ້ເຫລືອກຳລັງຂອງເຈົ້າ ເຈົ້າບໍ່ສາມາດທີ່
ຈະເຮັດແຕ່ຜູ້ດຽວໄດ້ 19ຈົ່ງຟັງສຽງຂອງເຮົາແດ່ ເຮົາຈະໃຫ້ຄຳແນະນຳແກ່ເຈົ້າ ແລະ ຂໍໃຫ້
ພຣະເຈົ້າຊົງສະຖິດຢູ່ກັບເຈົ້າ ເຈົ້າຈົ່ງເປັນຜູ້ແທນຂອງໄພ່ພົນຕໍ່ພຣະເຈົ້າ ນຳຄວາມກາບທູນ
ພຣະເຈົ້າ 20ເຈົ້າຈົ່ງສັ່ງສອນເຂົາໃຫ້ຮູ້ກົດ ແລະ ບັນຍັດຕ່າງໆ ແລະສະແດງໃຫ້ເຂົາຮູ້ຈັກທາງ
ທີ່ເຂົາຕ້ອງດຳເນີນຊີວິດ ແລະສິ່ງທີ່ຕ້ອງປະຕິບັດ 21-22ຍິ່ງກວ່ານັ້ນ ເຈົ້າຈົ່ງເລືອກຄົນທີ່ມີຄວາມ
ສາມາດຈາກພວກໄພ່ພົນ ຄືຄົນທີ່ຢຳເກງພຣະເຈົ້າ ໄວ້ໃຈໄດ້ ແລະກຽດຊັງສິນບົນ ແຕ່ງຕັ້ງ
ຄະນະຢ່າງນີ້ໄວ້ເປັນຜູ້ປົກຄອງຄົນພັນຄົນ ຮ້ອຍຄົນ ຫ້າສິບຄົນ ສິບຄົນ. ໃຫ້ເຂົາເຈົ້າພິພາກສາ
ຄວາມຂອງໄພ່ພົນຢູ່ສະເໝີ ສ່ວນຄະດີໃຫຍ່ໆກໍໃຫ້ເຂົານຳມາແຈ້ງຕໍ່ເຈົ້າ ແຕ່ຄະດີເລັກໆ
ນ້ອຍໆໃຫ້ເຂົາຕັດສິນກັນເອງ ການງານຂອງເຈົ້າຈະເບົາລົງ ແລະ ພວກເຂົາຈະແບກພາລະ
ຮ່ວມກັບເຈົ້າ 23ຖ້າເຮັດດັ່ງນີ້ ແລະ ພຣະເຈົ້າຊົງບັນຊາແລ້ວ ເຈົ້າກໍຈະສາມາດທົນໄດ້ ໄພ່ພົນ
ທັງປວງກໍຈະກັບໄປຍັງທີ່ອາໄສຂອງເຂົາດ້ວຍຄວາມສະຫງົບສຸກ"

24ໂມເຊກໍຟັງສຽງຂອງພໍ່ເຖົ້າ ແລະ ເຮັດຕາມທີ່ເພິ່ນແນະນຳທຸກປະການ 25-26ໂມເຊຈຶ່ງໄດ້
ເລືອກຄົນທີ່ມີຄວາມສາມາດຈາກຄົນ ອິສຣາເອນທັງປວງ ຕັ້ງໃຫ້ເປັນຫົວໜ້າໄພ່ພົນ ເປັນຜູ້
ປົກຄອງຄົນພັນຄົນ ຮ້ອຍຄົນ ຫ້າສິບຄົນ ສິບຄົນ. ໃຫ້ຄົນເຫລົ່ານັ້ນພິພາກສາຄວາມຂອງໄພ່
ພົນຢູ່ສະເໝີ ແຕ່ຄະດີຍາກໆ ໃຫ້ເຂົານຳໄປແຈ້ງໂມເຊ ສ່ວນຄະດີເລັກໆນ້ອຍໆ ແມ່ນໃຫ້ເຂົາ
ຕັດສິນເອງ

27ໂມເຊສົ່ງພໍ່ເຖົ້າຂອງຕົນກັບໄປ ພໍ່ເຖົ້າກໍກັບໄປຍັງເມືອງຂອງເພິ່ນ

# ບົດທີ 19

## ຊາວອິສຣາເອນທີ່ພູຊີນາຍ

1ໃນວັນທີໜຶ່ງຂອງເດືອນທີສາມນັບແຕ່ຊາວ ອິສຣາເອນໄດ້ອອກຈາກເອຢິບພວກເຂົາໄດ້ມາ
ເຖິງຖິ່ນກັນດານຊີນາຍ. 2ເມື່ອອອກຈາກເຣຟີດີມມາເຖິງຖິ່ນກັນດານຊີນາຍ ແລ້ວ ພວກເຂົາ
ໄດ້ຕັ້ງຄ້າຍພັກເຊົາຢູ່ຕໍ່ໜ້າພູນັ້ນ.

3ແລ້ວໂມເຊໄດ້ຂຶ້ນໄປເທິງພູ ເພື່ອເຝົ້າພຣະເຈົ້າ ພຣະຜູ້ເປັນເຈົ້າຊົງເອີ້ນຈາກພູມາຫາໂມເຊ
ວ່າ, "ຈົ່ງບອກເຊື້ອສາຍຢາໂຄບແລະ ບອກຊາວ ອິສຣາເອນດັ່ງນີ້. 4ພວກເຈົ້າໄດ້ເຫັນສິ່ງທີ່
ພຣະຜູ້ເປັນເຈົ້າໄດ້ກະທຳຕໍ່ຊາວ ເອຢິບແລ້ວ ພຣະອົງໄດ້ຍົກພວກເຈົ້າຂຶ້ນເໝືອນນົກອິນຊີຍົກ

ລູກຂຶ້ນດ້ວຍປີກຂອງມັນ ເພື່ອນຳພວກເຈົ້າມາຫາພຣະອົງ [5]ເພື່ອນຳພວກເຈົ້າມາຫາພຣະອົງ
ບັດນີ້ ຖ້າພວກເຈົ້າເຊື່ອຟັງພຣະອົງ ແລະ ຮັກສາຄຳໝັ້ນສັນຍາຂອງພຣະອົງໄວ້ພວກເຈົ້າກໍຈະ
ໄດ້ເປັນໄພ່ພົນພິເສດຂອງພຣະອົງ. [6]ເຈົ້າທັງຫລາຍຈະໄດ້ເປັນປະໂລຫິດຜູ້ຮັບໃຊ້ພຣະອົງ ແລະ
ເປັນໄພ່ພົນບໍລິສຸດຂອງພຣະອົງ ນີ້ແມ່ນຖ້ອຍຄຳທີ່ເຈົ້າຈະຕ້ອງບອກຊາວອິສຣາເອນ.”

[7]ດັ່ງນັ້ນ ໂມເຊ ຈຶ່ງໄປເອີ້ນພວກຫົວໜ້າປະຊາຊົນມາພ້ອມກັນ ແລະ ບອກສິ່ງທັງປວງທີ່ ພຣະ-
ເຈົ້າ ຊົງກ່າວສູ່ພວກເຂົາຟັງ. [8]ແລ້ວປະຊາຊົນໄດ້ຕອບພ້ອມກັນວ່າ “ທຸກສິ່ງທີ່ ພຣະຜູ້ເປັນເຈົ້າ
ຊົງບອກນັ້ນ ພວກຂ້ານ້ອຍຈະເຮັດຕາມ” ໂມເຊ ຈຶ່ງກາບທູນ ພຣະຜູ້ເປັນເຈົ້າ ຕາມທີ່ປະຊາຊົນ
ໄດ້ຕອບ.

[9]ພຣະຜູ້ເປັນເຈົ້າ ຊົງກ່າວຕໍ່ ໂມເຊ ວ່າ, “ເຮົາຈະມາຫາເຈົ້າດ້ວຍເມກອັນໜາຕຶບ ເພື່ອປະຊາ-
ຊົນຈະໄດ້ຍິນຂະນະເຮົາເວົ້າກັບເຈົ້າ ເຂົາຈະໄດ້ເຊື່ອເຈົ້າສະເໝີ” ໂມເຊ ຈຶ່ງກາບທູນ ພຣະຜູ້-
ເປັນເຈົ້າ ຕາມທີ່ປະຊາຊົນໄດ້ຕອບ.

[10]ພຣະຜູ້ເປັນເຈົ້າ ຊົງບອກ ໂມເຊ ວ່າ, “ຈົ່ງໄປບອກໃຫ້ປະຊາຊົນຕຽມຕົວນະມັດສະການໃນ
ມື້ນີ້ ແລະ ມື້ອື່ນ ພວກເຂົາຈະຕ້ອງຊັກເສື້ອຜ້າຂອງເຂົາໃຫ້ສະອາດ. [11]ໃນມື້ຖ້ວນສາມ ໃຫ້
ພວກເຂົາຕຽມຕົວໄວ້ ໃນມື້ນັ້ນ ເຮົາຈະລົງມາເທິງພູຊີນາຍ ຄົນທັງປວງຈະໄດ້ເຫັນເຮົາຢູ່ທີ່ນັ້ນ.
[12]ເຈົ້າຈົ່ງກຳນົດເຂດໃຫ້ປະຊາຊົນຮອບພູນັ້ນ ແລ້ວບອກເຂົາວ່າ ຈົ່ງລະວັງໃຫ້ດີ ຢ່າລ່ວງເຂດ
ຂຶ້ນໄປເທິງພູ ຫລືຕີນພູນັ້ນ ຖ້າຜູ້ໃດຂືນລ່ວງລ້ຳເຂົ້າໄປຢຽບຕີນພູຈະມີໂທດເຖິງຕາຍ. [13]ຜູ້ນັ້ນ
ຈະຖືກຄວ່າງດ້ວຍກ້ອນຫີນ ຫລື ຍິງດ້ວຍໜ້າທະນູ ບໍ່ໃຫ້ຂ້າດ້ວຍໃຊ້ມືຖືກຕ້ອງຕົວລາວ ຈະ
ເປັນມະນຸດ ຫລືສັດກໍໃຫ້ຂ້າເສຍຢ່າໄວ້ຊີວິດ ເມື່ອໄດ້ຍິນສຽງເປົ່າແກແລ້ວ ຈົ່ງໃຫ້ປະຊາຊົນຂຶ້ນ
ມາເທິງພູໄດ້.”

[14]ໂມເຊ ຈຶ່ງລົງຈາກພູມາຫາປະຊາຊົນ ເພື່ອບອກໃຫ້ເຂົາຕຽມຕົວນະມັດສະການ ພວກເຂົາ
ໄດ້ຊັກເສື້ອຜ້າຂອງຕົນໃຫ້ສະອາດ. [15]ແລ້ວ ໂມເຊ ໄດ້ບອກເຂົາວ່າ, “ທ່ານທັງຫລາຍຈົ່ງຕຽມຕົວ
ໃຫ້ດີໃນມື້ທີສາມ ຢ່າຮ່ວມຫລັບນອນນຳຍິງເດັດ ຂາດ.”

[16]ຢູ່ມາໃນຕອນເຊົ້າຂອງມື້ທີສາມ ໄດ້ເກີດຟ້າຮ້ອງຟ້າ ແມບ ແລະ ມີເມກອັນໜາຕຶບປົກຫຸ້ມ
ຢູ່ເທິງພູນັ້ນ ພ້ອມກັບມີສຽງແກດັງສະໜັ່ນຫວັ່ນໄຫວ ຈົນຄົນທັງປວງທີ່ຢູ່ໃນຄ້າຍຢ້ານກົວຕົວ
ສັ່ນ. [17]ໂມເຊ ຈຶ່ງນຳປະຊາຊົນອອກຈາກຄ້າຍໄປເຝົ້າ ພຣະເຈົ້າ. ພວກເຂົາໄດ້ມາຢຸດຢືນຢູ່ທີ່ຕີນພູ
[18]ພວກເຂົາໄດ້ມາຢຸດຢືນຢູ່ທີ່ຕີນພູ ຫົວພູຊີນາຍ ມີຄວັນປົກຫຸ້ມຢູ່ ເພາະ ພຣະຜູ້ເປັນເຈົ້າ ສະ-
ເດັດລົງມາເທິງພູນັ້ນດ້ວຍ ຄວັນໄຟໄດ້ພຸ່ງຂຶ້ນ ເໝືອນຄວັນໃນເຕົາໃຫຍ່ ປະຊາຊົນທັງປວງຈຶ່ງ
ຢ້ານສັ່ນຢ່າງຮຸນແຮງ. [19]ເມື່ອສຽງ ແກດັງ ແຮງຂຶ້ນ ໂມເຊ ໄດ້ຂາບທູນ ພຣະເຈົ້າ ພຣະອົງກໍຊົງ
ຕອບດ້ວຍສຽງຟ້າຮ້ອງ.

[20]ພຣະຜູ້ເປັນເຈົ້າ ໄດ້ສະເດັດລົງມາເທິງຈອມພູ ຊີນາຍ ຊົງເອີ້ນ ໂມເຊ ໃຫ້ຂຶ້ນໄປເທິງຈອມ
ໂມເຊ ຈຶ່ງຂຶ້ນໄປ. [21]ແລ້ວ ພຣະຜູ້ເປັນເຈົ້າ ຊົງບອກ ໂມເຊ ວ່າ, “ຈົ່ງລົງໄປຕັກເຕືອນປະຊາຊົນ
ຢ່າໃຫ້ເຂົາຂ້າມເຂດເຂົ້າມາເບິ່ງເຮົາ ຖ້າບໍ່ດັ່ງນັ້ນ ເຂົາຈະຕ້ອງຕາຍເປັນຈຳນວນຫລາຍ. [22]ອີກ
ປະການໜຶ່ງ ພວກປະໂລຫິດຜູ້ທີ່ເຂົ້າມາໃກ້ເຮົານັ້ນ ຈົ່ງໃຫ້ເຂົາຊຳລະຕົວໃຫ້ບໍລິສຸດ ຖ້າບໍ່ດັ່ງນັ້ນ

ເຮົາຈະລົງ ໂທດເຂົາ.”

[23]ໂມເຊໄດ້ຂາບທູນພຣະຜູ້ເປັນເຈົ້າວ່າ, “ປະຊາຊົນຂຶ້ນມາບໍ່ໄດ້ ເພາະພຣະອົງຊົງເຕືອນ
ພວກຂ້ານ້ອຍວ່າ ຈົ່ງກັ້ນເຂດໄວ້ຮອບພູນັ້ນ ແລະ ໃຫ້ເຮັດເປັນບ່ອນສັກ ສິດ.” [24]ພຣະຜູ້ເປັນ-
ເຈົ້າຊົງບອກໂມເຊວ່າ, “ເຈົ້າຈົ່ງລົງໄປເສຍ ແລ້ວໃຫ້ເອົາອາໂຣນຂຶ້ນມານຳເຈົ້າ ແຕ່ພວກປະ-
ໂລຫິດກັບປະຊາຊົນຢ່າຂ້າມເຂດຂຶ້ນມາຫາເຮົາ. [25]ຖ້າບໍ່ດັ່ງນັ້ນເຮົາລົງໂທດເຂົາ” ໂມເຊຈຶ່ງລົງ
ໄປ ແລະບອກປະຊາຊົນຢ່າງນັ້ນ.

# ບົດທີ 20

## ພຣະບັນຍັດສິບປະການ

[1]ພຣະຜູ້ເປັນເຈົ້າຊົງກ່າວຖ້ອຍຄຳຕໍ່ໄປນີ້ວ່າ,

[2] “ເຮົາແມ່ນພຣະຜູ້ເປັນເຈົ້າຂອງພວກເຈົ້າ ຜູ້ໄດ້ນຳພາພວກເຈົ້າອອກຈາກປະເທດເອຢິບ
ຄືອອກຈາກປະເທດທີ່ພວກເຈົ້າໄດ້ຕົກເປັນທາດ.

[3] ພວກເຈົ້າຢ່າມີພະອື່ນ ນອກຈາກເຮົາ.

[4] ພວກເຈົ້າຢ່າເຮັດຮູບໂຄລົບສຳລັບຕົນ ຫລື ຮູບສິ່ງໜຶ່ງສິ່ງໃດທີ່ມີຢູ່ໃນສະຫວັນຊັ້ນຟ້າ
ໃນແຜ່ນດິນ ຫລື ໃນນ້ຳລຸ່ມແຜ່ນດິນ. [5]ຢ່າຂາບໄຫວ້ຮູບເຫລົ່ານັ້ນ ເພາະວ່າເຮົາເປັນ
ພຣະຜູ້ເປັນເຈົ້າຂອງພວກເຈົ້າ ແລະ ເປັນພຣະເຈົ້າຜູ້ຫວງແຫນພວກເຈົ້າ
ເຮົາຈະລົງໂທດລູກຫລານຂອງຜູ້ທີ່ຊັງເຮົາເຖິງສາມສີ່ຊົ່ວອາຍຸຄົນ.
[6]ແຕ່ຈະສະແດງຄວາມຮັກໝັ້ນຄົງຕໍ່ຜູ້ທີ່ຮັກເຮົາ ແລະ
ຕໍ່ຜູ້ທີ່ປະພຶດຕາມພຣະບັນຍັດຂອງເຮົາສືບໄປຫລາຍຊົ່ວອາຍຸພັນຄົນ.

[7] ພວກເຈົ້າຢ່າໃຊ້ຊື່ພຣະຜູ້ເປັນເຈົ້າຂອງເຈົ້າໄປໃນທາງທີ່ຜິດ
ເພາະເຮົາຈະລົງໂທດຜູ້ທີ່ໃຊ້ຊື່ເຮົາໄປໃນທາງທີ່ຜິດ.

[8] ພວກເຈົ້າຈົ່ງນັບຖືວັນສິນ ໃຫ້ຖືເປັນວັນສັກສິດຂອງພຣະຜູ້ເປັນເຈົ້າ
ຈົ່ງເຮັດວຽກທັງປວງຂອງເຈົ້າແຕ່ໃນຫົກມື້ ແຕ່ມື້ຖ້ວນເຈັດໃຫ້ຖືເປັນມື້ສັກສິດຂອງພຣະ-
ຜູ້ເປັນເຈົ້າຂອງເຈົ້າ. [9-10]ຈົ່ງເຮັດວຽກທັງປວງຂອງເຈົ້າແຕ່ໃນຫົກມື້
ແຕ່ມື້ຖ້ວນເຈັດໃຫ້ຖືເປັນມື້ສັກສິດຂອງພຣະຜູ້ເປັນເຈົ້າຂອງເຈົ້າ. ໃນມື້ນັ້ນ
ໃຫ້ເຈົ້າເອງພ້ອມດ້ວຍລູກຊາຍຍິງ ຂ້ອຍທາດແລະ
ສັດລ້ຽງຂອງພວກເຈົ້າຕະຫລອດທັງຄົນຕ່າງດ້າວທີ່ອາໄສຢູ່ໃນບ້ານເມືອງຂອງເຈົ້າ
ຢຸດເຮັດວຽກທັງໝົດ. [11]ໃນຫົກມື້ນັ້ນພຣະຜູ້ເປັນເຈົ້າໄດ້ຊົງສ້າງສະຫວັນຊັ້ນຟ້າ
ແຜ່ນດິນໂລກ ທະເລ ແລະ ສິ່ງສາລະພັດທີ່ມີຢູ່ໃນສາມແຫ່ງນີ້
ແຕ່ໃນມື້ຖ້ວນເຈັດພຣະອົງໄດ້ຢຸດພັກ ດ້ວຍເຫດນີ້ພຣະຜູ້ເປັນເຈົ້າ
ຈຶ່ງໄດ້ອວຍພອນໃຫ້ມື້ຖ້ວນເຈັດເປັນວັນສິນບໍລິສຸດສຳລັບພຣະອົງ.

[12] ຈົ່ງນັບຖືບິດາມານດາຂອງເຈົ້າ ເພື່ອເຈົ້າຈະມີອາຍຸໝັ້ນຍືນຢູ່ໃນແຜ່ນດິນທີ່ພຣະຜູ້ເປັນ-
ເຈົ້າຂອງເຈົ້າໄດ້ມອບໃຫ້.

13 ພວກເຈົ້າຢ່າຂ້າຄົນ.

14 ຢ່າລ່ວງເກີນຜົວເມຍຜູ້ອື່ນ.

15 ຢ່າລັກຊັບ.

16 ຢ່າເປັນພະຍານເທັດ ໃສ່ຮ້າຍເພື່ອນບ້ານຂອງຕົນ.

17 ຢ່າອິດສາຢາກໄດ້ເຮືອນຂອງຜູ້ອື່ນ ຢ່າອິດສາຢາກໄດ້ຜົວ ຫລື ເມຍຂອງເພື່ອນບ້ານ
ຢາກໄດ້ຂ້ອຍທາດ ຢາກໄດ້ງົວ ຄວາຍ ຢາກໄດ້ລໍ ຫລື ສິ່ງອື່ນໃດທີ່ເປັນຂອງຄົນອື່ນ."

## ຄວາມຢ້ານກົວຂອງປະຊາຊົນ

18ເມື່ອປະຊາຊົນໄດ້ຍິນສຽງຟ້າຮ້ອງ ສຽງແກ ເຫັນຟ້າແມບເຫລື້ອມ ແລະ ເຫັນຄວັນໄຟພຸ່ງ
ຂຶ້ນຈາກພູ ພວກເຂົາກໍຢ້ານກົວຕົວສັ່ນ ແລະ ຢືນຢູ່ຫ່າງໄກ. 19ພວກເຂົາໄດ້ເວົ້າກັບໂມເຊ ວ່າ
"ເຊີນທ່ານເວົ້າເຖີ້ນ ພວກຂ້ານ້ອຍຈະຟັງ ແຕ່ຖ້າພຣະເຈົ້າເວົ້າ ພວກຂ້ານ້ອຍກໍຈະຕາຍ."
20ໂມເຊຈຶ່ງເວົ້າກັບປະຊາຊົນວ່າ "ຢ່າສູ່ຢ້ານ ພຣະເຈົ້າໄດ້ສະເດັດມາທົດລອງພວກເຈົ້າຊື່ໆ
ດອກ ເພື່ອໃຫ້ພວກເຈົ້າຢໍາເກງພຣະອົງ ເພື່ອວ່າພວກເຈົ້າຈະບໍ່ເຮັດບາບອີກ." 21ແຕ່ປະຊາຊົນກໍ
ຍັງຢືນຢູ່ຫ່າງໄກ ມີແຕ່ໂມເຊເທົ່ານັ້ນທີ່ໄດ້ເຂົ້າໄປໃກ້ເມກອັນໜາຕຶບບ່ອນພຣະເຈົ້າສະຖິດຢູ່.

## ຂໍ້ບັນຍັດກ່ຽວກັບແທ່ນບູຊາ

22ພຣະຜູ້ເປັນເຈົ້າຊົງບອກໂມເຊວ່າ, "ໃຫ້ບອກຊາວອິສຣາເອນດັ່ງນີ້: ເຈົ້າທັງຫລາຍໄດ້
ເຫັນແລ້ວວ່າ ພຣະຜູ້ເປັນເຈົ້າໄດ້ເວົ້າກັບພວກເຈົ້າຈາກສະຫວັນຊັ້ນຟ້າ. 23ພວກເຈົ້າຢ່າເຮັດຮູບ
ພະເງິນ ພະຄໍາສໍາລັບຂາບໄຫວ້ທຽບຄຽງກັບພຣະອົງ ຈົ່ງເອົາດິນກໍ່ແທ່ນບູຊາສໍາລັບພຣະອົງ.
24ຈົ່ງເອົາດິນກໍ່ແທ່ນບູຊາສໍາລັບພຣະອົງ ແລະ ເທິງແທ່ນນັ້ນ ຈົ່ງເອົາແກະ ຫລື ງົວເປັນ
ເຄື່ອງເຜົາບູຊາ ແລະເປັນເຄື່ອງຖວາຍ ເພື່ອຄວາມສາມັກຄີ ໃນບ່ອນທີ່ພຣະອົງຊົງບອກໃຫ້
ພວກເຈົ້າຂາບໄຫວ້ພຣະອົງນັ້ນ ພຣະອົງຈະມາຫາ ແລະ ອວຍພອນພວກເຈົ້າ. 25ຖ້າພວກເຈົ້າ
ກໍ່ແທ່ນບູຊາດ້ວຍຫີນສໍາລັບພຣະອົງ ຢ່າໄດ້ກໍ່ດ້ວຍຫີນທີ່ຕັດຖູແລ້ວ ເພາະຖ້າພວກເຈົ້າເອົາຫີນທີ່
ຕັດຖູແລ້ວມາກໍ່ແທ່ນບູຊາ ຫີນນັ້ນກໍຈະໃຊ້ບໍ່ໄດ້ສໍາລັບພຣະອົງ. 26ພວກເຈົ້າຢ່າເຮັດແທ່ນທີ່ມີ
ຂັ້ນໄດ ເພາະວ່າຈະເປັນເຫດໃຫ້ພວກເຈົ້າເຜີຍຂອງລັບໃສ່ແທ່ນນັ້ນ."

# ບົດທີ 21

## ຄວາມຍຸດຕິທໍາລະຫວ່າງນາຍກັບຂ້າທາດ

1"ຕໍ່ໄປນີ້ ເປັນຄໍາຕັດສິນຊຶ່ງເຈົ້າຕ້ອງປະກາດໃຫ້ເຂົາທັງຫລາຍຮູ້ໄວ້

2ຖ້າເຈົ້າຈະຊື້ຄົນເຮັບເຣີໄວ້ເປັນຂ້າທາດ ເຂົາຈະຕ້ອງບົວລະບັດເຈົ້າຫົກປີ ແຕ່ປີທີເຈັດເຂົາ
ຈະໄດ້ເປັນອິດສະຫລະໂດຍບໍ່ຕ້ອງເສຍຄ່າໄຖ່ 3ຖ້າຂ້າທາດໄດ້ມາແຕ່ຜູ້ດຽວ ຈົ່ງປ່ອຍລາວໄປ
ແຕ່ຜູ້ດຽວ ຖ້າລາວມີເມຍຕ້ອງປ່ອຍເມຍຂອງລາວໄປດ້ວຍ 4ຖ້ານາຍຫາເມຍໃຫ້ລາວ ແລະ
ເມຍນັ້ນເກີດລູກຊາຍກໍດີ ລູກສາວກໍດີ ເມຍກັບລູກນັ້ນຈະເປັນຄົນຂອງນາຍ ລາວຈະເປັນອິດ-
ສະຫລະໄດ້ແຕ່ຜູ້ດຽວ 5ຖ້າຂ້າທາດນັ້ນມາກ່າວເປັນທີ່ເຂົ້າໃຈແຈ່ມແຈ້ງວ່າ 'ຂ້າພະເຈົ້າຮັກນາຍ
ແລະ ລູກເມຍຂອງຂ້າພະເຈົ້າ ຂ້າພະເຈົ້າບໍ່ຢາກອອກໄປເປັນອິດສະຫລະ' 6ໃຫ້ນາຍພາຂ້າ

ທາດນັ້ນໄປຫາພວກຜູ້ພິພາກສາ ພາລາວໄປທີ່ປະຕູ ຫລື ໄມ້ວົງກົບປະຕູ ແລ້ວໃຫ້ນາຍເຈາະຫູ
ລາວດ້ວຍເຫລັກໝາດ ລາວກໍຈະຢູ່ບົວລະບັດນາຍຕໍ່ໄປຈົນຊົ່ວຊີວິດຂອງລາວ
[7]ຖ້າຄົນໃດຂາຍລູກສາວເປັນຂ້າທາດ ຍິງນັ້ນຈະບໍ່ໄດ້ເປັນອິດສະຫລະເໝືອນກັບຂ້າທາດ
ຊາຍ [8]ຖ້າຍິງນັ້ນບໍ່ເປັນທີ່ພໍໃຈຂອງນາຍທີ່ຮັບນາງໄວ້ເປັນເມຍ ຕ້ອງຍອມໃຫ້ຄົນອື່ນໄຖ່ນາງໄປ
ແຕ່ບໍ່ມີສິດຈະຂາຍຍິງນັ້ນໃຫ້ແກ່ຊາວຕ່າງຊາດ ເພາະບໍ່ໄດ້ສັດຊື່ຕໍ່ຍິງນັ້ນແລ້ວ [9]ຖ້ານາຍຍົກຍິງ
ນັ້ນໃຫ້ເປັນເມຍລູກຊາຍຂອງຕົນ ກໍໃຫ້ລາວປະຕິບັດຕໍ່ຍິງນັ້ນດັ່ງເປັນລູກສາວຂອງຕົນ [10]ຖ້າ
ລາວຫາຍິງອື່ນມາເປັນເມຍ ຢ່າໃຫ້ລາວຢຸດອາຫານການກິນ ເສື້ອຜ້າ ແລະ ປະເພນີຜົວເມຍກັບ
ຄົນເກົ່າ [11]ຖ້າລາວບໍ່ໄດ້ກະທຳຕາມປະການໃດໃນສາມປະການນີ້ ຍິງນັ້ນຈະໄປເສຍກໍໄດ້ໂດຍບໍ່
ຕ້ອງມີຄ່າໄຖ່ ບໍ່ຕ້ອງເສຍເງິນ

## ຄວາມຍຸດຕິທຳກ່ຽວກັບຄວາມເຈັບປ່ວຍ ແລະ ການກະທຳຜິດຕໍ່ຄົນອື່ນ

[12]ຜູ້ໃດໄດ້ຕີຄົນໜຶ່ງໃຫ້ຕາຍ ຜູ້ນັ້ນຈຳຕ້ອງຮັບໂທດເຖິງຕາຍຄືກັນ [13]ຖ້າລາວບໍ່ໄດ້ເຈດຕະນາ
ຂ້າຄົນນັ້ນ ແຕ່ຄົນນັ້ນຕາຍເພາະພຣະເຈົ້າຊົງປ່ອຍໃຫ້ຕາຍດ້ວຍມືຂອງລາວ ເຮົາຈະຕັ້ງບ່ອນ
ໜຶ່ງໄວ້ ໃຫ້ລາວໜີໄປບ່ອນນັ້ນ [14]ແຕ່ຖ້າຜູ້ໃດເຈດຕະນາຫັກຫລັງຂ້າເພື່ອນບ້ານ ກໍໃຫ້ດຶງລາວ
ໄປຈາກແທ່ນບູຊາຂອງເຮົາ ເພື່ອລົງໂທດໃຫ້ເຖິງຕາຍ
[15]ຜູ້ໃດ ທີ່ຕີບິດາມານດາຂອງຕົນ ຜູ້ນັ້ນຈະຕ້ອງຖືກໂທດເຖິງຕາຍ
[16]ຜູ້ໃດລັກຄົນໄປຂາຍກໍດີ ຫລື ເອົາໄປເປັນທາດຂອງ ຕົນກໍດີ ຜູ້ລັກນັ້ນຈະຕ້ອງຖືກໂທດ
ເຖິງຕາຍ
[17]ຜູ້ໃດດ່າສາບແຊ່ງບິດາມານດາຂອງຕົນ ຜູ້ນັ້ນຕ້ອງຖືກໂທດເຖິງຕາຍ
[18-19]ຖ້າມີຜູ້ຜິດກັນ ຕີກັນ ແລະ ຝ່າຍໜຶ່ງເອົາຫີນຄວ່າງຫລື ທຸບຕີ ແຕ່ອີກຝ່າຍໜຶ່ງບໍ່ເຖິງ
ແກ່ຄວາມຕາຍ ພຽງແຕ່ເຈັບປ່ວຍ ຕ້ອງນອນພັກ ຖ້າຜູ້ທີ່ເຈັບນັ້ນລຸກຂຶ້ນ ຖືໄມ້ເທົ້າຍ່າງອອກໄປ
ໄດ້ອີກ ຜູ້ຕີນັ້ນກໍພົ້ນໂທດ ແຕ່ເຂົາຈະຕ້ອງເສຍຄ່າເຈັບປ່ວຍ ແລະ ຄ່າຮັກສາບາດແຜຈົນຫາຍ
ເປັນປົກກະຕິ
[20]ຖ້າຜູ້ໃດທີ່ຕີຂ້າທາດຊາຍຍິງຂອງຕົນດ້ວຍໄມ້ຈົນຕາຍຄາມື ຜູ້ນັ້ນຕ້ອງຖືກໂທດ [21]ຫາກວ່າ
ຂ້າທາດນັ້ນມີຊີວິດຕໍ່ໄປໄດ້ມື້ໜຶ່ງ ຫລື ສອງມື້ຈຶ່ງຕາຍ ນາຍກໍບໍ່ຕ້ອງຖືກໂທດ ເພາະຂ້າທາດນັ້ນ
ເປັນດັ່ງເງິນຂອງນາຍ
[22]ຖ້າມີຜູ້ຊາຍຕີກັນ ແລ້ວບັງເອີນໄປຖືກຜູ້ຍິງແມ່ມານເຮັດໃຫ້ຫລຸລູກ ແຕ່ຍິງນັ້ນບໍ່ເປັນອັນ-
ຕະລາຍ ຕ້ອງປັບຜູ້ນັ້ນ ຕາມແຕ່ຜົວຂອງຍິງນັ້ນຈະຮຽກຮ້ອງເອົາຈາກລາວແລະ ລາວຈະຕ້ອງ
ເສຍຕາມທີ່ພວກຜູ້ພິພາກສາຈະຕັດສິນ [23]ຖ້າຫາກວ່າເປັນເຫດໃຫ້ເກີດອັນຕະລາຍປະການໃດ
ກໍໃຫ້ພິຈາລະນາດັ່ງນີ້ ຄືຊີວິດແທນຊີວິດ [24]ຕາແທນຕາ ແຂ້ວແທນແຂ້ວ ມືແທນມື ຕີນແທນ
ຕີນ [25]ຮອຍໄໝ້ແທນຮອຍໄໝ້ ແຜແທນແຜ ຮອຍຊ້ຳແທນຮອຍຊ້ຳ

## ກົດໝາຍກ່ຽວກັບຄວາມຮັບຜິດຊອບຂອງເຈົ້າຂອງສັດ

[26]ຖ້າຜູ້ໃດຕີໃນຕາຂອງຂ້າທາດຊາຍຍິງໃຫ້ບອດໄປ ລາວຕ້ອງປ່ອຍຂ້າທາດຜູ້ນັ້ນໃຫ້ເປັນ

ອິດສະຫລະ ເນື່ອງດ້ວຍໃນຕາຂອງທາດນັ້ນ 27ຖ້າຜູ້ໃດເຮັດໃຫ້ແຂ້ວຂ້າທາດຊາຍຍິງຫລຸດໄປ
ລາວຕ້ອງປ່ອຍຂ້າທາດຜູ້ນັ້ນເປັນອິດສະຫລະ ເນື່ອງດ້ວຍແຂ້ວຂອງທາດນັ້ນ

28ຖ້າງົວຊົນຊາຍ ຫລື ຍິງເຖິງຕາຍ ຈົ່ງເອົາຫີນຄວ່າງງົວນັ້ນໃຫ້ຕາຍ ແລະ ຢ່າກິນເນື້ອ
ຂອງມັນ ແຕ່ເຈົ້າຂອງງົວໂຕນັ້ນບໍ່ມີໂທດ 29ແຕ່ຖ້າງົວນັ້ນເຄີຍຊົນຄົນມາກ່ອນ ແລະ ມີຜູ້ມາ
ເຕືອນໃຫ້ເຈົ້າຂອງຮູ້ ແຕ່ເຈົ້າຂອງບໍ່ໄດ້ກັກຂັງມັນໄວ້ ມັນຈຶ່ງ ໄປຊົນຊາຍ ຫລື ຍິງເຖິງຕາຍ
ໃຫ້ເອົາຫີນຄວ່າງງົວນັ້ນເສຍໃຫ້ຕາຍ ແລະ ໃຫ້ລົງໂທດເຈົ້າຂອງເຖິງຕາຍດ້ວຍ 30ຖ້າຈະຮຽກ-
ຮ້ອງເອົາຄ່າໄຖ່ຈາກຜູ້ນັ້ນ ລາວຕ້ອງເສຍຄ່າໄຖ່ແທນຊີວິດຂອງລາວຕາມທີ່ໄດ້ຮຽກຮ້ອງ 31ຫາກ
ງົວນັ້ນຊົນລູກຊາຍ ແລະ ລູກສາວ ກໍຈົ່ງປັບໂທດຕາມຄຳຕັດສິນຂໍ້ນີ້ດັ່ງດຽວກັນ 32ຖ້າງົວນັ້ນ
ຊົນຂ້າທາດຊາຍຍິງຂອງຜູ້ໃດ ເຈົ້າຂອງງົວຕ້ອງໃຫ້ເງິນແກ່ນາຍຂອງຂ້າທາດນັ້ນສາມສິບເຊເຂ
ແລ້ວຕ້ອງເອົາຫີນຄວ່າງງົວນັ້ນໃຫ້ຕາຍເສຍ

33ຖ້າຜູ້ໃດເປີດບໍ່ ຫລື ຂຸດບໍ່ ແຕ່ບໍ່ໄດ້ປິດໄວ້ ແລ້ວມີງົວຫລື ລາຕົກລົງໄປຕາຍໃນບໍ່ນັ້ນ
34ເຈົ້າຂອງບໍ່ຕ້ອງໃຫ້ຄ່າຊົດໃຊ້ລາວ ຕ້ອງເສຍເງິນຄ່າສັດນັ້ນໃຫ້ແກ່ເຈົ້າຂອງ ຊາກສັດທີ່ຕາຍ
ນັ້ນຈະຕົກເປັນຂອງເຈົ້າຂອງບໍ່ 35ຖ້າງົວຂອງຜູ້ໃດຊົນງົວຂອງຜູ້ອື່ນໃຫ້ຕາຍ ລາວຕ້ອງຂາຍງົວ
ທີ່ເປັນຢູ່ ແລ້ວມາແບ່ງເງິນກັນ ແລະ ງົວທີ່ຕາຍນັ້ນໃຫ້ແບ່ງກັນດ້ວຍ 36ຫລື ຖ້າຮູ້ແລ້ວວ່າງົວ
ນັ້ນເຄີຍຊົນມາກ່ອນ ແຕ່ເຈົ້າຂອງບໍ່ໄດ້ກັກຂັງໄວ້ ເຈົ້າຂອງຕ້ອງໃຊ້ງົວແທນງົວ ແລະ ງົວທີ່
ຕາຍນັ້ນກໍຕົກເປັນຂອງຕົນ”

# ບົດທີ 22

## ສິດທິອຳນາດຂອງເຈົ້າຂອງສັດ ແລະ ສິ່ງຂອງ

1“ຖ້າຜູ້ໃດລັກງົວ ຫລື ແກະໄປຂ້າ ຫລື ຂາຍ ໃຫ້ຜູ້ນັ້ນໃຊ້ງົວຫ້າໂຕແທນງົວໜຶ່ງໂຕ ແລະ
ແກະສີ່ໂຕແທນແກະໂຕໜຶ່ງ

2ຖ້າຜູ້ໃດເຫັນຄົນຂີ້ລັກກຳລັງຂຸດຮູເຂົ້າໄປ ແລ້ວໃຫ້ຕີຄົນຂີ້ລັກນັ້ນໃຫ້ຕາຍ ໂດຍທີ່ຜູ້ຕີບໍ່ຕ້ອງ
ຖືກໂທດ ເພາະການຕີຄົນນັ້ນ 3ຖ້າເປັນຕອນກາງເວັນ ລາວຕ້ອງໄດ້ຮັບໂທດ ເພາະການຕີຄົນ
ນັ້ນ ແຕ່ຜູ້ຮ້າຍນັ້ນຕ້ອງໃຫ້ຄ່າຊົດໃຊ້ ຖ້າລາວບໍ່ມີຫຍັງຈະໃຊ້ໃຫ້ ຕ້ອງຂາຍຕົວລາວເປັນຄ່າ
ຂອງທີ່ລັກໄປນັ້ນ 4ຖ້າຈັບຂອງທີ່ລັກໄປນັ້ນໄດ້ຢູ່ໃນມືຂອງລາວ ຈະເປັນງົວກໍດີ ຫລື ລາກໍດີ
ຫລື ແກະກໍດີ ຊຶ່ງຍັງເປັນຢູ່ ຂອງລັກນັ້ນຕ້ອງໃຫ້ຄ່າຊົດໃຊ້ເປັນສອງເທົ່າ

5ຖ້າຜູ້ໃດປ່ອຍໃຫ້ສັດກິນຂອງໃນນາ ຫລື ໃນສວນອະງຸ່ນ ຫລື ປ່ອຍສັດຂອງຕົນ ແລ້ວມັນ
ໄປກິນໃນນາຂອງຜູ້ອື່ນ ລາວຕ້ອງໃຫ້ຄ່າຊົດໃຊ້ໂດຍໃຫ້ຂອງທີ່ດີທີ່ສຸດໃນນາຂອງຕົນ ແລະ
ຂອງທີ່ດີທີ່ສຸດໃນສວນອະງຸ່ນຂອງຕົນເປັນຄ່າເສຍຫາຍ

6ຖ້າຈູດໄຟທີ່ກອງໜາມ ແລະ ໄຟລາມໄປຕິດກອງເຂົ້າ ຫລື ຕິດຕົ້ນເຂົ້າຊຶ່ງບໍ່ໄດ້ກ່ຽວ ຫລື
ຕິດທົ່ງນາໄໝ້ເສຍ ຜູ້ທີ່ຈູດໄຟນັ້ນຕ້ອງໃຊ້ຄ່າເສຍຫາຍເຕັມຈຳນວນ

7ຖ້າຜູ້ໃດຝາກເງິນ ຫລື ສິ່ງຂອງໄວ້ກັບເພື່ອນບ້ານແລ້ວຂອງນັ້ນຖືກລັກໄປຈາກເຮືອນຜູ້ນັ້ນ
ຖ້າຈັບຄົນລັກໄດ້ຕ້ອງໃຊ້ແທນເປັນສອງເທົ່າ 8ຖ້າຈັບຄົນລັກບໍ່ໄດ້ ຈົ່ງນຳເຈົ້າຂອງເຮືອນມາຫາ

ພວກຜູ້ພິພາກສາເພື່ອຈະເບິ່ງວ່າມີຂອງຕົນເອງໄດ້ລັກ ສິ່ງຂອງຂອງເພື່ອນເຮືອນນັ້ນ ຫລື ບໍ່ໃນ
ຄະດີຟ້ອງຮ້ອງທຸກຢ່າງ ຈະເປັນເລື່ອງງົວ ລາ ແກະ ຫລື ເສື້ອຜ້າ ຫລື ເລື່ອງສິ່ງຂອງໃດໆທີ່
ຫາຍໄປ ຖ້າ [9]ບໍ່ໃນຄະດີຟ້ອງຮ້ອງທຸກຢ່າງ ຈະເປັນເລື່ອງງົວ ລາ ແກະ ຫລື ເສື້ອຜ້າ ຫລື
ເລື່ອງສິ່ງຂອງໃດໆທີ່ຫາຍໄປ ຖ້າມີຄົນມາອ້າງວ່າສິ່ງນີ້ສິ່ງນັ້ນເປັນຂອງຕົນ ຈົ່ງນຳຄະດີຂອງຄູ່
ຄວາມນັ້ນໄປຫາພວກຜູ້ພິພາກສາ ພວກຜູ້ພິພາກສານັ້ນຈະຕັດສິນວ່າຜູ້ໃດຜິດ ຜູ້ນັ້ນຈະຕ້ອງໃຊ້
ຄ່າຊົດໃຊ້ເປັນສອງເທົ່າ [10]ຖ້າຜູ້ໃດຝາກລາ ຫລື ງົວ ຫລື ແກະ ຫລື ສັດໃດໆໄວ້ກັບເພື່ອນ
ບ້ານ ແລະ ສັດນັ້ນເກີດຕາຍລົງ ຫລື ເປັນອັນຕະລາຍ ຫລື ມີຜູ້ມາໄລ່ຕ້ອນໄປຈາກເຮືອນນັ້ນ
ໂດຍບໍ່ມີໃຜເຫັນ [11]ຕ້ອງໃຫ້ຜູ້ຮັບຝາກນັ້ນປະຕິຍານຕົວຕໍ່ເພື່ອນບ້ານ ຕໍ່ພຣະພັກພຣະຜູ້ເປັນເຈົ້າ
ເພື່ອເບິ່ງວ່າ ມີຂອງລາວລັກຂອງຂອງເພື່ອນບ້ານນັ້ນຈິງຫລືບໍ່ ແລ້ວເຈົ້າຂອງນັ້ນຈະຕ້ອງຍິນ
ຍອມ ສ່ວນຜູ້ຮັບຝາກນັ້ນບໍ່ຕ້ອງໃຫ້ຄ່າຊົດໃຊ້ [12]ແຕ່ຖ້າສັດນັ້ນຖືກລັກໄປ ຂະນະເມື່ອຜູ້ຮັບຝາກ
ຢູ່ນຳ ຜູ້ຮັບຝາກຕ້ອງໃຫ້ຄ່າຊົດໃຊ້ແກ່ເຈົ້າຂອງ [13]ຖ້າມີສັດຮ້າຍມາກັດຈີກສັດນັ້ນຕາຍ ຈົ່ງເອົາ
ຊາກມາໃຫ້ກວດເບິ່ງເປັນຫລັກຖານ ແລ້ວຜູ້ຮັບຝາກບໍ່ຕ້ອງໃຫ້ຄ່າຊົດໃຊ້ແທນສັດຖືກກັດຈີກນັ້ນ

[14]ຖ້າຜູ້ໃດຢືມສິ່ງໃດໆໄປຈາກເພື່ອນບ້ານແລ້ວເກີດເປັນອັນຕະລາຍ ຫລື ຕາຍລະຫວ່າງເວ-
ລາທີ່ເຈົ້າຂອງບໍ່ຢູ່ ຜູ້ຢືມຕ້ອງໃຫ້ຄ່າຊົດໃຊ້ເຕັມຕາມຈຳນວນ [15]ຖ້າເຈົ້າຂອງຢູ່ນຳ ຜູ້ຢືມບໍ່ຕ້ອງ
ໃຫ້ຄ່າຊົດໃຊ້ ຖ້າເປັນຂອງເຊົ່າ ໃຫ້ເອົາແຕ່ຄ່າເຊົ່າເທົ່ານັ້ນ

## ກົດຫມາຍກ່ຽວກັບສິນລະທຳ ແລະ ສາດສະຫນາ

[16]ຖ້າຜູ້ໃດຫລອກລວງຍິງພົມມະຈາລີທີ່ຍັງບໍ່ມີຄູ່ໝັ້ນ ແລະ ນອນຮ່ວມກັບຍິງນັ້ນ ຜູ້ນັ້ນຈະ
ຕ້ອງເສຍເງິນສິນສອດ ແລະ ຕ້ອງຮັບຍິງນັ້ນເປັນເມຍຂອງຕົນ [17]ຖ້າພໍ່ບໍ່ຍອມຢ່າງເດັດຂາດທີ່
ຈະຍົກຍິງນັ້ນໃຫ້ເປັນເມຍ ລາວກໍຕ້ອງເສຍເງິນເທົ່າສິນສອດຕາມທຳນຽມສູ່ຂໍຍິງພົມມະຈາລີນັ້ນ

[18]ສຳລັບຍິງແມ່ມົດ ເຈົ້າຢ່າໃຫ້ລອດຊີວິດຢູ່ເລີຍ

[19]ຜູ້ໃດຮ່ວມສິນສູ່ທາງເພດກັບສັດ ຜູ້ນັ້ນຈະຕ້ອງຖືກລົງໂທດເຖິງຕາຍ

[20]ຜູ້ໃດຖວາຍບູຊາແກ່ພະຕ່າງໆເວັ້ນແຕ່ພຣະຜູ້ເປັນເຈົ້າອົງດຽວ ຜູ້ນັ້ນຕ້ອງຖືກທຳລາຍເສຍ
ຊື້ນ

[21]ເຈົ້າຢ່າບີບບັງຄັບ ຫລື ຂົ່ມເຫງຄົນຕ່າງດ້າວເລີຍ ເພາະເຈົ້າທັງຫລາຍກໍເຄີຍເປັນຄົນຕ່າງ
ດ້າວຢູ່ໃນປະ ເທດເອຢິບ

[22]ຢ່າຂົ່ມເຫງແມ່ໝ້າຍ ຫລື ລູກກຳພ້າພໍ່ [23-24]ຖ້າເຈົ້າຂົ່ມເຫງເຂົາໂດຍວິທີໃດກໍຕາມ ແລະ
ເຂົາຮ້ອງ ທຸກເຖິງເຮົາ ເຮົາຈະຟັງຄຳຮ້ອງທຸກຂອງເຂົາແນ່ນອນຄວາມຮ້າຍຂອງເຮົາຈະຮ້ອນ
ຂຶ້ນ ແລະ ເຮົາຈະປະຫານເຈົ້າດ້ວຍດາບ ເມຍຂອງເຈົ້າຈະຕ້ອງເປັນໝ້າຍ ແລະລູກຂອງເຈົ້າ
ຈະຕ້ອງເປັນກຳພ້າພໍ່

[25]ຖ້າເຈົ້າໃຫ້ໄພ່ພົນຂອງເຮົາຜູ້ທີ່ເປັນຄົນຍາກຈົນ ແລະຢືມເງິນຂອງເຈົ້າໄປ ຢ່າຖືວ່າຕົນເປັນ
ເຈົ້າໜີ້ ແລະຢ່າຄິດດອກເບ້ຍຈາກຜູ້ນັ້ນ [26]ຖ້າເຈົ້າໄດ້ຮັບເສື້ອຄຸມຂອງເພື່ອນບ້ານໄວ້ເປັນຂອງ
ປະກັນ ຈົ່ງຄືນຂອງນັ້ນໃຫ້ລາວກ່ອນຕາເວັນຕົກດິນ [27]ເພາະລາວມີເສື້ອຄຸມໂຕນັ້ນໂຕດຽວເປັນ
ເຄື່ອງປົກຄຸມຮ່າງກາຍ ບໍ່ດັ່ງນັ້ນເວລານອນ ລາວຈະເອົາຫຍັງຫົ່ມ? ຕໍ່ມາ ເມື່ອລາວທູນຮ້ອງ-

ທຸກຕໍ່ເຮົາ ເຮົາຈະຮັບຟັງ ເພາະເຮົາເປັນຜູ້ມີເມດຕາກະລຸນາ
28ຢ່າດ່າ**ພຣະເຈົ້າ** ຫລື ສາບແຊ່ງຜູ້ປົກຄອງຊົນຊາດຂອງເຈົ້າ
29ຢ່າຊັກຊ້າທີ່ຈະນຳພືດຜົນ ແລະ ນຳໝາກໄມ້ອັນທຳອິດຂອງເຈົ້າມາຖວາຍ**ພຣະເຈົ້າ** ຈົ່ງ
ຖວາຍລູກຊາຍຫົວປີຂອງເຈົ້າໃຫ້ແກ່ເຮົາ 30ສຳລັບງົວ ແລະ ແບ້ ແກະຂອງເຈົ້າ ຈົ່ງເຮັດດັ່ງນັ້ນ
ຄືກັນ ໃຫ້ລູກມັນຢູ່ກັບແມ່ເຈັດວັນ ເຖິງວັນທີ່ແປດຈົ່ງພາມາຖວາຍແກ່ເຮົາ
31ເຈົ້າທັງຫລາຍເປັນຄົນບໍລິສຸດອຸທິດແກ່ເຮົາ ເຫດສະນັ້ນ ເນື້ອສັດທີ່ຖືກກັດຕາຍໃນທົ່ງນາ
ເຈົ້າຢ່າກິນ ຈົ່ງຖິ້ມໃຫ້ໝາກິນເສຍ”

# ບົດທີ 23

## ກົດສິນລະທຳ

1“ຢ່ານຳເລື່ອງບໍ່ຈິງໄປບອກຕໍ່ໆກັນ ຢ່າຮ່ວມມືເປັນພະຍານໃສ່ຮ້າຍຜູ້ອື່ນ ຮ່ວມກັບຄົນຊົ່ວ
2ຢ່າເຮັດຊົ່ວຕາມຢ່າງຄົນຈຳນວນຫລາຍທີ່ເຂົາເຮັດກັນນັ້ນເລີຍ ຢ່າອ້າງພະຍານເຂົ້າຂ້າງໝູ່
ຫລາຍ ຈະເຮັດໃຫ້ຂາດຄວາມຍຸດຕິທຳໄປ 3ທັງຢ່າເຂົ້າຂ້າງຄົນຈົນໃນຄະດີຂອງເຂົາ
4ຖ້າເຈົ້າພົບງົວ ຫລື ລາຂອງສັດຕູຫລົງມາ ຈົ່ງພາໄປສົ່ງຄືນໃຫ້ເຈົ້າຂອງຈົນໄດ້ 5ຖ້າເຫັນລາ
ຂອງຜູ້ທີ່ກຽດຊັງເຈົ້າລົ້ມລົງເພາະບັນທຸກຂອງໜັກ ຢ່າໄດ້ເມີນເສີຍເສຍ ຈົ່ງຊ່ວຍເຂົາຍົກມັນຂຶ້ນ
6ເຈົ້າຢ່າບິດເບືອນຄຳພິພາກສາໃຫ້ຜິດໄປຈາກຄວາມຍຸດຕິທຳທີ່ຄົນຈົນຄວນໄດ້ຮັບໃນຄະດີ
ຂອງເຂົາ 7ເຈົ້າຈົ່ງຫລີກໃຫ້ຫ່າງໄກຈາກການໃສ່ຄວາມຄົນອື່ນ ຢ່າປະຫານຊີວິດຄົນທີ່ປາດສະ
ຈາກຄວາມຜິດ ແລະ ຄົນຊອບທຳ ເພາະເຮົາຈະບໍ່ຍົກໂທດໃຫ້ຄົນຊົ່ວ
8ຢ່າຮັບສິນບົນເລີຍ ເພາະວ່າສິນບົນເຮັດໃຫ້ຄົນຕາດີກາຍເປັນຄົນຕາບອດໄປ ແລະ ພິກ
ຄະດີຂອງຄົນຊອບທຳເສຍໄດ້
9ເຈົ້າຢ່າຂົ່ມເຫງຄົນຕ່າງດ້າວເພາະເຈົ້າຮູ້ຈັກໃຈຄົນຕ່າງດ້າວແລ້ວ ເພາະວ່າເຈົ້າທັງຫລາຍກໍ
ເຄີຍເປັນຄົນຕ່າງດ້າວໃນປະເທດເອຢິບມາກ່ອນ

## ປີແຫ່ງການຢຸດພັກ

10ຈົ່ງຫວ່ານພືດ ແລະ ກ່ຽວເກັບຜົນໃນນາຂອງເຈົ້າຕະຫລອດຫົກປີ 11ແຕ່ປີທີເຈັດນັ້ນຈົ່ງງົດ
ເສຍ ປ່ອຍໃຫ້ນານັ້ນວ່າງຢູ່ ເພື່ອໃຫ້ຄົນຈົນໃນຊົນຊາດຂອງເຈົ້າເກັບກິນ ສ່ວນທີ່ເຫລືອນອກ
ນັ້ນກໍໃຫ້ສັດປ່າກິນ ສ່ວນສວນອະງຸ່ນ ແລະ ສວນໝາກກອກເທດ ເຈົ້າຈົ່ງເຮັດຢ່າງດຽວກັນ
12ຈົ່ງເຮັດການງານຂອງເຈົ້າຫົກວັນ ແຕ່ໃນວັນທີເຈັດນັ້ນຈົ່ງຢຸດງານ ເພື່ອງົວ ລາຂອງເຈົ້າຈະ
ໄດ້ພັກ ແລະ ລູກຊາຍຂ້າໃຊ້ຂອງເຈົ້າ ກັບຄົນຕ່າງດ້າວຈະໄດ້ພັກຜ່ອນໃຫ້ສົດຊື່ນດ້ວຍ
13ສິ່ງທັງປວງທີ່ເຮົາສັ່ງເຈົ້າໄວ້ນັ້ນຈົ່ງລະວັງ ຖືໃຫ້ດີ ແລະ ຢ່າອອກຊື່ພະອື່ນເລີຍ ຢ່າໃຫ້ໄດ້
ຍິນຊື່ຂອງພະເຫລົ່ານັ້ນອອກຈາກປາກຂອງເຈົ້າ

## ເທດສະການປະຈຳປີ

14ຈົ່ງຖືເທດສະການຖວາຍແກ່ເຮົາປີລະສາມເທື່ອ 15ຈົ່ງຖືເທດສະການກິນເຂົ້າຈີ່ບໍ່ມີເຊື້ອແປ້ງ
ຕາມເວລາທີ່ກຳນົດໄວ້ (ໃນເດືອນອາບິບ ອັນເປັນເດືອນຊຶ່ງເຮົາບັນຊາໄວ້ ເຈົ້າຈົ່ງກິນເຂົ້າຈີ່ບໍ່ມີ

ເຊື້ອແປ້ງເຈັດວັນຕາມທີ່ເຮົາສັ່ງເຈົ້າໄວ້ແລ້ວເພາະໃນເດືອນນັ້ນເຈົ້າອອກຈາກເອຢິບ ຢ່າໃຫ້ຜູ້
ໃດມາເຝົ້າເຮົາມືເປົ່າເລີຍ)

16ຈົ່ງຖືເທດສະການກິນລ້ຽງສະຫລອງການເກັບກ່ຽວ ຖວາຍພືດຜົນທຳອິດທີ່ເກີດຈາກແຮງ
ງານຂອງເຈົ້າ ຊຶ່ງເຈົ້າໄດ້ຫວ່ານພືດລົງໃນນາ ເຈົ້າຈົ່ງຖືເທດສະການກິນລ້ຽງສະຫລອງການ
ເກັບພືດຜົນປາຍປີ ເມື່ອເຈົ້າເກັບພືດຜົນຈາກທົ່ງນາອັນເປັນຜົນງານຂອງເຈົ້າ 17ໃຫ້ຜູ້ຊາຍທັງ
ປວງເຂົ້າເຝົ້າພຣະຜູ້ເປັນເຈົ້າ ພຣະເຈົ້າປີລະສາມເທື່ອ

18ຢ່າຖວາຍເລືອດຈາກເຄື່ອງບູຊາຂອງເຮົາ ພ້ອມກັບເຂົ້າຈີ່ມີເຊື້ອແປ້ງ ຫລື ປ່ອຍໃຫ້ມີໄຂ-
ມັນໃນເຄື່ອງບູຊາຂອງເຮົາເຫລືອຢູ່ຈົນເຖິງຮຸ່ງເຊົ້າ

19ພືດຜົນອັນດີເລີດ ຊຶ່ງໄດ້ເກັບເທື່ອທຳອິດຈາກໄຮ່ນາຂອງເຈົ້ານັ້ນ ຈົ່ງນຳມາຖວາຍໃນ
ພຣະວິຫານພຣະຜູ້ເປັນເຈົ້າ ພຣະເຈົ້າຂອງເຈົ້າ ຢ່າຕົ້ມເນື້ອລູກແບ້ດ້ວຍນ້ຳນົມຂອງແມ່ມັນເລີຍ

## ລະບຽບໃນການຊະນະແຜ່ນດິນການາອານ

20ເບິ່ງແມ, ເຮົາໃຊ້ຜູ້ສົ່ງຂ່າວສະຫວັນອົງໜຶ່ງຢ່າງນຳໜ້າພວກເຈົ້າ ເພື່ອຄອຍຖ້າລະວັງຮັກ-
ສາພວກເຈົ້າຕາມທາງ ນຳໄປເຖິງບ່ອນທີ່ເຮົາໄດ້ຕຽມໄວ້ 21ຈົ່ງເອົາໃຈໃສ່ຜູ້ສົ່ງຂ່າວນັ້ນ ແລະ
ເຊື່ອຟັງສຽງຂອງເຂົາ ຢ່າຝ່າຝືນເຂົາ ເພາະເຂົາຈະບໍ່ຍົກໂທດການລະເມີດໃຫ້ເຈົ້າເລີຍ ດ້ວຍວ່າ
ເຂົາກະທຳໃນນາມຂອງເຮົາ 22ຖ້າເຈົ້າທັງຫລາຍເຊື່ອຟັງສຽງຂອງເຂົາແທ້ໆ ແລະ ເຮັດທຸກສິ່ງ
ຕາມທີ່ເຮົາສັ່ງໄວ້ ເຮົາຈະເປັນສັດຕູຕໍ່ສັດຕູຂອງພວກເຈົ້າ ແລະ ຈະເປັນສັດຕູຕໍ່ຜູ້ທີ່ຕໍ່ສູ້ພວກ
ເຈົ້າ 23ດ້ວຍວ່າທູດສະຫວັນຂອງເຮົາຈະໄປຂ້າງໜ້າພວກເຈົ້າ ແລະ ຈະນຳພວກເຈົ້າໄປເຖິງຄົນ
ອະໂມຣິດ ຄົນຮິດຕີ ຄົນເປຣີຊີ ຄົນການາອານ ຄົນຮີວີ ແລະຄົນເຢບຸດ ແລ້ວເຮົາຈະຕັດ
ຄົນເຫລົ່ານັ້ນອອກເສຍ

24ຢ່າຂາບໄຫວ້ພະຂອງເຂົາ ຫລື ບົວລະບັດ ຫລື ເຮັດຕາມແບບຢ່າງທີ່ພວກເຂົາກະທຳ ແຕ່
ຈົ່ງທຳລາຍຮູບເຄົາລົບຂອງເຂົາ ແລະ ຕີເສົາສັກສິດຂອງເຂົາເສຍໃຫ້ແຫລກລະອຽດ 25ຈົ່ງບົວ-
ລະບັດພຣະຜູ້ເປັນເຈົ້າ ພຣະເຈົ້າຂອງເຈົ້າ ແລ້ວພຣະອົງຈະຊົງອວຍພອນແກ່ອາຫານ ແລະ
ນ້ຳຂອງເຈົ້າ ເຮົາຈະບັນດານໃຫ້ພະຍາດຕ່າງໆຫາຍໄປຈາກທ່າມກາງພວກເຈົ້າ 26ຈະບໍ່ມີການ
ຫລຸລູກ ຫລື ເປັນໝັນໃນດິນແດນຂອງເຈົ້າ ເຮົາຈະໃຫ້ເຈົ້າມີອາຍຸຍືນຍາວ

27ເຮົາຈະບັນດານໃຫ້ເກີດຄວາມຢ້ານກົວຂຶ້ນກ່ອນໜ້າພວກເຈົ້າ ເຮົາຈະທຳລາຍຊາວເມືອງ
ທັງປວງທີ່ພວກເຈົ້າໄປຜະເຊີນໜ້ານັ້ນ ເຮົາຈະໃຫ້ພວກສັດຕູທັງປວງຫັນຫລັງໜີພວກເຈົ້າ
28ເຮົາຈະໃຊ້ໃຫ້ຝູງຕໍ່ລ່ວງໜ້າໄປກ່ອນພວກເຈົ້າ ພວກມັນຈະໄລ່ຄົນຮີວີ ຄົນການາອານ ຄົນ
ຮິດຕີໄປໃຫ້ພົ້ນໜ້າພວກເຈົ້າ 29ເຮົາຈະບໍ່ໄລ່ເຂົາໄປໃຫ້ພົ້ນໜ້າພວກເຈົ້າໃນລະຍະປີດຽວ ຢ້ານ
ວ່າ ແຜ່ນດິນຈະຮົກຮ້າງໄປ ແລະ ສັດປ່າຈະທະວີຈຳນວນຂຶ້ນຕໍ່ສູ້ກັບພວກເຈົ້າ 30ແຕ່ເຮົາຈະ
ໄລ່ເຂົາໄປໃຫ້ພົ້ນໜ້າພວກເຈົ້າເທື່ອລະໜ້ອຍຈົນພວກເຈົ້າທະວີຈຳນວນຫລາຍຂຶ້ນ ແລ້ວໄດ້ຮັບ
ດິນ ແດນນັ້ນເປັນກຳມະສິດ 31ເຮົາຈະກຳນົດເຂດແດນຂອງພວກເຈົ້າໄວ້ຕັ້ງແຕ່ທະເລແດງຈົນ
ເຖິງທະເລຂອງຊາວຟີລິດສະຕິນ ຕັ້ງແຕ່ຖິ່ນກັນດານຈົນເຖິງແມ່ນ້ຳ ເພາະເຮົາຈະມອບຊາວ
ເມືອງນັ້ນໄວ້ໃນມືຂອງພວກເຈົ້າ ໃຫ້ພວກເຈົ້າໄລ່ເຂົາໄປເສຍໃຫ້ພົ້ນໜ້າ

32ພວກເຈົ້າຢ່າເຮັດຄຳໝັ້ນສັນຍາກັບເຂົາ ຫລື ກັບພະຂອງເຂົາເລີຍ 33ເຂົາຈະອາໄສໃນດິນ-
ແດນຂອງເຈົ້າບໍ່ໄດ້ ຢ້ານວ່າເຂົາຈະຊັກຈູງໃຫ້ເຈົ້າເຮັດບາບຕໍ່ເຮົາ ເພາະວ່າຖ້າພວກເຈົ້າບົວລະ-
ບັດພະຂອງເຂົາ ເລື່ອງນີ້ກໍຈະເປັນບ້ວງແຮ້ວດັກຈັບເຈົ້າເປັນແນ່"

# ບົດທີ 24

## ຊົງໃຫ້ຄຳໝັ້ນສັນຍາ

1ພຣະຜູ້ເປັນເຈົ້າຊົງບອກໂມເຊວ່າ, "ເຈົ້າກັບອາໂຣນ ນາດາບ ອາບີຮູ ແລະ ພວກຫົວ-
ໜ້າເຈັດສິບຄົນຂອງຊາວອິສຣາເອນ ຈົ່ງຂຶ້ນມາຫາເຮົາເທິງພູໃຫ້ຂາບໄຫວ້ເຮົາຢູ່ໃນໄລຍະໄກ.
2ໃຫ້ເຈົ້າຄົນດຽວເຂົ້າມາໃກ້ເຮົາ ຄົນອື່ນຢ່າເຂົ້າມາໃກ້ແລະ ຢ່າໃຫ້ປະຊາຊົນຂຶ້ນມາກັບເຈົ້າ."

3ໂມເຊຈຶ່ງນຳຄຳສັ່ງກັບກົດໝາຍທັງໝົດຂອງພຣະຜູ້ເປັນເຈົ້າ ມາຊີ້ແຈງໃຫ້ປະຊາຊົນໄດ້ຮູ້
ປະຊາຊົນທັງໝົດໄດ້ຕອບເປັນສຽງດຽວກັນວ່າ, "ຖ້ອຍຄຳທັງໝົດທີ່ພຣະຜູ້ເປັນເຈົ້າໄດ້ຊົງສັ່ງ
ນັ້ນ ພວກເຮົາຈະເຮັດຕາມ" ໂມເຊໄດ້ຈາລຶກຂໍ້ຄຳສັ່ງທັງໝົດຂອງພຣະຜູ້ເປັນເຈົ້າໄວ້. 4ຕອນ
ເຊົ້າມືດຂອງມື້ຕໍ່ມາ ໂມເຊໄດ້ສ້າງແທ່ນບູຊາໄວ້ທີ່ຕີນພູ ແລະ ໄດ້ຕັ້ງຫີນສິບສອງກ້ອນຕາມຈຳ-
ນວນຕະກູນຂອງອິສຣາເອນໄວ້ເປັນອະນຸສອນ. 5ຕໍ່ມາໂມເຊໄດ້ໃຊ້ພວກຄົນໜຸ່ມຊາວອິສຣາ-
ເອນ ຖວາຍເຄື່ອງເຜົາບູຊາ ແລະ ເຜົາງົວຖວາຍ ເພື່ອຄວາມສາມັກຄີແດ່ພຣະຜູ້ເປັນເຈົ້າ.
6ໂມເຊໄດ້ແບ່ງເລືອດງົວເຄິ່ງໜຶ່ງໄວ້ໃນຊາມ. 7ອີກເຄິ່ງໜຶ່ງໄດ້ຊິດໃສ່ແທ່ນບູຊາ ແລ້ວເພິ່ນໄດ້
ອ່ານໜັງ ສືຄຳໝັ້ນສັນຍາດ້ວຍສຽງດັງຕໍ່ໜ້າປະຊາຊົນ ຜູ້ຊຶ່ງເວົ້າວ່າ, "ພວກເຮົາຈະເຊື່ອຟັງ
ແລະ ເຮັດຕາມທຸກຢ່າງທີ່ພຣະຜູ້ເປັນເຈົ້າຊົງສັ່ງ." 8ຂະນະນັ້ນ ໂມເຊໄດ້ເອົາເລືອດໃນຊາມຊິດ
ໃສ່ປະຊາຊົນ ແລະ ເວົ້າວ່າ, "ເບິ່ງແມ, ນີ້ແມ່ນເລືອດແຫ່ງຄຳໝັ້ນສັນຍາທີ່ອົງພຣະຜູ້ເປັນເຈົ້າ
ຊົງມອບແກ່ເຈົ້າດ້ວຍຄຳສັ່ງທັງໝົດຂອງພຣະອົງ."

9ໂມເຊ ອາໂຣນ ນາດາບ ອາບີຮູ ແລະພວກຫົວໜ້າເຈັດສິບຄົນຂອງຊາວອິສຣາເອນໄດ້
ຂຶ້ນໄປເທິງພູ ພວກເຂົາໄດ້ເຫັນພຣະເຈົ້າຂອງຊາວ ອິສຣາເອນ. 10ຢູ່ລຸ່ມພຣະບາດຂອງພຣະ-
ອົງ ມີສິ່ງໜຶ່ງເບິ່ງຄືກັບແກ້ວໄພທູນສີສຸກໃສ່ຄືກັບທ້ອງຟ້າ. 11ພຣະອົງບໍ່ໄດ້ທຳຮ້າຍບັນດາຫົວ-
ໜ້າຂອງຊາວ ອິສຣາເອນ ພວກເຂົາໄດ້ເຫັນພຣະເຈົ້າ ແຕ່ຍັງມີຊີວິດ ແລະ ກິນດື່ມຢູ່ຕໍ່ໄປ.

## ໂມເຊເທິງພູຊີນາຍ

12ພຣະຜູ້ເປັນເຈົ້າຊົງບອກໂມເຊວ່າ, "ຈົ່ງຂຶ້ນມາຫາເຮົາເທິງພູ ແລະ ພັກຢູ່ທີ່ນີ້ ເຮົາຈະໃຫ້
ແຜ່ນຫີນທີ່ມີຂໍ້ພຣະທຳ ແລະ ຂໍ້ບັນຍັດແກ່ເຈົ້າ ຊຶ່ງເຮົາໄດ້ຈາລຶກໄວ້ເພື່ອສອນປະຊາຊົນ."
13ໂມເຊຈຶ່ງຕຽມຕົວຂຶ້ນໄປເທິງພູຂອງພຣະເຈົ້າ ພ້ອມກັບໂຢຊວຍຄົນໃຊ້ຂອງຕົນ. 14ໂມເຊໄດ້
ເວົ້າກັບພວກຫົວໜ້າວ່າ, "ຈົ່ງລໍຖ້າພວກຂ້າພະເຈົ້າຢູ່ທີ່ນີ້ຈົນກວ່າເຮົາຈະກັບມາຫາພວກເຈົ້າອີກ
ອາໂຣນກັບຮູເຣໄດ້ຢູ່ນຳພວກທ່ານ ຖ້າມີເລື່ອງຫຍັງເກີດຂຶ້ນ ກໍໃຫ້ໄປຫາທ່ານທັງສອງນີ້ເດີ."

15-16ໂມເຊໄດ້ຂຶ້ນໄປເທິງພູ ແລະ ມີເມກປົກຫຸ້ມພູນັ້ນຢູ່ ພຣະລັດສະໝີ ຄວາມຍິ່ງໃຫຍ່ຂອງ
ພຣະຜູ້ເປັນເຈົ້າໄດ້ລົງມາເທິງພູຊີນາຍ ເມກໄດ້ປົກຫຸ້ມພູນັ້ນຢູ່ເປັນເວລາຫົກມື້ ໃນມື້ຖ້ວນເຈັດ
ພຣະຜູ້ເປັນເຈົ້າໄດ້ຊົງເອີ້ນໂມເຊຈາກທ່າມກາງໝູ່ເມກ. 17(ຊາວອິສຣາເອນໄດ້ເຫັນພຣະລັດ-

ສະໜີຄວາມຍິ່ງໃຫຍ່ຂອງພຣະຜູ້ເປັນເຈົ້າ ຄືເຫັນເປັນເໝືອນກັບແປວ ໄຟລຸກໄໝ້ຢູ່ເທິງຈອມ
ພູ). 18ໂມເຊໄດ້ເຂົ້າໄປໃນເມກ ແລະ ຂຶ້ນໄປເທິງພູ ແລ້ວໄດ້ຢູ່ທີ່ນັ້ນເປັນເວລາສີ່ສິບມື້ສີ່ສິບຄືນ.

# ບົດທີ 25

## ອິສຣາເອນຊ່ວຍກັນຖວາຍເພື່ອສ້າງຫໍເຕັນສັກສິດ

1ຝ່າຍພຣະຜູ້ເປັນເຈົ້າກ່າວກັບໂມເຊວ່າ 2"ຈົ່ງສັ່ງຊົນຊາດອິສຣາເອນໃຫ້ນຳຂອງມາຖວາຍ
ແກ່ເຮົາ ຂອງນັ້ນໃຫ້ຮັບມາຈາກທຸກໆຄົນທີ່ເຕັມໃຈຖວາຍ 3ຂອງຖວາຍຊຶ່ງເຈົ້າຈະຕ້ອງຮັບຈາກ
ເຂົາຄື ທອງຄຳ ເງິນ ທອງສຳລິດ 4ດ້າຍສີຟ້າ ສີມ່ວງ ສີແດງເຂັ້ມ ຜ້າປ່ານເນື້ອລະອຽດແລະ
ຂົນແບ້ 5ໜັງແກະໂຕຜູ້ຍ້ອມສີແດງ ໜັງເຫງັນ ແລະໄມ້ກະຖິນເທດ 6ນ້ຳມັນເຕີມຕະກຽງ
ເຄື່ອງເທດປຸງນ້ຳມັນສຳລັບເຈີມ ແລະປຸງເຄື່ອງຫອມ 7-9ພອຍສີນ້ຳເຂົ້າ ແລະພອຍສຳລັບຝັງໃນ
ເອໂຟດ ແລະທັບຊວງ. ແລ້ວໃຫ້ເຂົາສ້າງສະຖານບໍລິສຸດຖວາຍແກ່ເຮົາ ເພື່ອເຮົາຈະໄດ້ຢູ່
ທ່າມກາງພວກເຂົາ ແບບຢ່າງຫໍເຕັນສັກສິດແລະເຄື່ອງທັງປວງຂອງຫໍເຕັນນັ້ນ ເຈົ້າຈົ່ງເຮັດຕາມ
ທີ່ເຮົາແຈ້ງໄວ້ແກ່ເຈົ້ານີ້ທຸກປະການ

## ຫີບຄຳໝັ້ນສັນຍາ

10ໃຫ້ເຂົາເຮັດຫີບໃບໜຶ່ງດ້ວຍໄມ້ກະຖິນເທດ ຍາວສອງສອກຄືບ ກວ້າງສອກຄືບ ແລະ ສູງ
ສອກຄືບ 11ຫີບນັ້ນຫຸ້ມດ້ວຍທອງຄຳບໍລິສຸດທັງດ້ານໃນ ແລະດ້ານນອກ ແລ້ວເຮັດຂອບຄຳ
ອ້ອມຮອບຫີບນັ້ນ. 12ໃຫ້ຫລໍ່ຫູທອງຄຳສີ່ຫູສຳລັບສອດຄານຫາມຫີບນັ້ນ ຕິດໄວ້ທີ່ມຸມທັງສີ່
ເບື້ອງນີ້ສອງຫູ ແລະເບື້ອງນັ້ນສອງຫູ 13ໃຫ້ເຮັດຄານຫາມດ້ວຍໄມ້ກະຖິນເທດຫຸ້ມດ້ວຍທອງຄຳ
14ແລ້ວສອດຄານຫາມເຂົ້າທີ່ຫູຂ້າງຫີບສຳລັບໃຊ້ຍົກຫາມຫີບນັ້ນ 15ໄມ້ຄານຫາມໃຫ້ສອດໄວ້ໃນ
ຫູຂອງຫີບ ຢ່າຖອດອອກ 16ພຣະບັນຍັດທີ່ເຮົາຈະໃຫ້ແກ່ເຈົ້າ ຈົ່ງເກັບໄວ້ໃນຫີບນັ້ນ

17ແລ້ວຈົ່ງເຮັດພຣະທີ່ນັ່ງກະລຸນາ (ຝາອັດຫີບ) ດ້ວຍທອງຄຳບໍລິສຸດ ຍາວສອງສອກຄືບ
ກວ້າງສອກຄືບ 18-20ຈົ່ງເຮັດເທວະດາເຄຣຸບທອງຄຳສອງຮູບ ໂດຍຕັ້ງໄວ້ທີ່ປາຍພຣະທີ່ນັ່ງກະ-
ລຸນາທັງສອງຂ້າງເຮັດເຄຣຸບໄວ້ທີ່ປາຍພຣະທີ່ນັ່ງກະລຸນາຂ້າງລະຮູບ ເຮັດເຄຣຸບນັ້ນ ແລະໃຫ້
ຕອນປາຍທັງສອງຂ້າງຕິດເປັນເນື້ອດຽວກັບພຣະທີ່ນັ່ງກະລຸນາ ໃຫ້ເຄຣຸບກາງປີກອອກໄວ້ເບື້ອງ
ເທິງ ປົກພຣະທີ່ນັ່ງກະລຸນາໄວ້ດ້ວຍປີກ ແລະໃຫ້ຫັນໜ້າເຂົ້າຫາກັນ ໃຫ້ເຄຣຸບຫັນໜ້າມາຫາ
ພຣະທີ່ນັ່ງກະລຸນາ 21ແລ້ວຈົ່ງຕັ້ງພຣະທີ່ນັ່ງກະລຸນານັ້ນໄວ້ເທິງຫີບ ຈົ່ງບັນຈຸພຣະບັນຍັດ ຊຶ່ງ
ເຮົາຈະໃຫ້ແກ່ເຈົ້າໄວ້ໃນຫີບນັ້ນ 22ໃນທີ່ນັ້ນ ເຮົາຈະຢູ່ໃຫ້ເຈົ້າເຂົ້າເຝົ້າ ແລະຈະສົນທະນາກັບ
ເຈົ້າຈາກພຣະທີ່ນັ່ງກະລຸນາລະຫວ່າງກາງເຄຣຸບທັງສອງ ຊຶ່ງຕັ້ງຢູ່ເທິງຫີບພຣະບັນຍັດ ເຮົາຈະ
ສົນທະນາກັບເຈົ້າທຸກເລື່ອງ ຊຶ່ງເຮົາຈະສັ່ງເຈົ້າໃຫ້ປະກາດແກ່ຊົນຊາດ ອິສຣາເອນ

23ແລ້ວຈົ່ງເອົາໄມ້ກະຖິນເທດມາເຮັດໂຕະໜ່ວຍໜຶ່ງ ຍາວສອງສອກ ກວ້າງໜຶ່ງສອກ ແລະ
ສູງສອກຄືບ 24ເຈົ້າຈົ່ງຫຸ້ມໂຕະນັ້ນດ້ວຍທອງຄຳບໍລິສຸດ ແລະເຮັດກະຈັງທອງຄຳຮອບໂຕະນັ້ນ
ດ້ວຍ 25ຂອບນອກໂຕະນັ້ນເຮັດໃຫ້ກວ້າງໜຶ່ງຝາມືໂດຍຮອບ ແລ້ວເຮັດກະຈັງທອງຄຳປະກອບ
ໃຫ້ຮອບຂອບນັ້ນ 26ຈົ່ງເຮັດຫູທອງຄຳສີ່ຫູຕິດໄວ້ທີ່ມຸມຂາໂຕະທັງສີ່ 27ຫູນັ້ນໃຫ້ຕິດກັບຂອບ

ນອກ ເພື່ອເອົາໄວ້ສອດຄານຫາມ [28]ເຈົ້າຈົ່ງເຮັດຄານຫາມດ້ວຍໄມ້ກະຖິນເທດ ຫຸ້ມດ້ວຍທອງ-
ຄຳ ໃຫ້ຫາມໂຕະດ້ວຍໄມ້ນີ້ [29]ເຈົ້າຈົ່ງເຮັດຈານ ແລະບ່ວງ ຈອງ ແລະອ່າງນ້ຳທີ່ໃຊ້ສຳລັບລິນ
ເຄື່ອງດື່ມບູຊາ ສິ່ງເຫລົ່ານີ້ເຈົ້າຈົ່ງເຮັດດ້ວຍທອງຄຳບໍລິສຸດ [30]ແລະເຈົ້າຈົ່ງວາງເຂົ້າຈີ່ໜ້າພຣະ-
ພັກໄວ້ເທິງໂຕະນັ້ນຕໍ່ໜ້າເຮົາເປັນນິດ

[31]ເຈົ້າຈົ່ງເຮັດຄັນຕະກຽງອັນໜຶ່ງດ້ວຍທອງຄຳບໍລິສຸດ ຈົ່ງໃຊ້ຄ້ອນຕີເຮັດຄັນຕະກຽງ ໃຫ້ທັງ
ລຳຕົວ ກິ່ງ ດອກ ດອກຈູມ ແລະກີບຕິດເປັນເນື້ອດຽວກັນກັບຄັນຕະກຽງນັ້ນ [32]ໃຫ້ມີກິ່ງຫົກກິ່ງ
ແຍກອອກຈາກຄັນຕະກຽງນັ້ນຂ້າງລະສາມກິ່ງ [33]ກິ່ງໜຶ່ງມີດອກເໝືອນດອກໄມ້ໝາກບົກສາມ
ດອກ ທຸກໆດອກໃຫ້ມີດອກຈູມ ແລະກີບ ອີກກິ່ງໜຶ່ງ ໃຫ້ມີດອກສາມດອກເໝືອນດອກໝາກ
ບົກບານທຸກໆດອກໃຫ້ມີດອກຈູມ ແລະກີບໃຫ້ເປັນດັ່ງນີ້ ທັງຫົກກິ່ງຊຶ່ງຍື່ນອອກຈາກຄັນຕະກຽງ
[34]ສຳລັບຄັນຕະກຽງນັ້ນໃຫ້ມີດອກສີ່ດອກເໝືອນດອກໄມ້ໝາກບົກ ທັງດອກຈູມ ແລະກີບ
[35]ກ້ອງກິ່ງທຸກໆຄູ່ທັງຫົກກິ່ງທີ່ຄັນຕະກຽງນັ້ນ ໃຫ້ມີດອກຕູມເປັນເນື້ອດຽວກັນກັບຄັນຕະກຽງ
[36]ດອກຈູມ ແລະກິ່ງເຮັດໃຫ້ເປັນເນື້ອດຽວກັນກັບຄັນຕະກຽງ ໃຫ້ທຸກສ່ວນເປັນເນື້ອດຽວກັນດ້ວຍ
ທອງຄຳບໍລິສຸດທີ່ໃຊ້ຄ້ອນຕີ

[37]ຈົ່ງເຮັດຕະກຽງເຈັດດວງສຳລັບຄັນຕະກຽງນັ້ນ ແລ້ວຈູດຕະກຽງໃຫ້ສ່ອງແສງໄປທາງໜ້າ
ຄັນຕະກຽງ [38]ມີດຕັດໃສ້ຕະກຽງ ແລະຖາດໃສ່ມີດຕັດໃຫ້ເຮັດດ້ວຍທອງຄຳບໍລິສຸດ [39]ຄັນຕະ-
ກຽງກັບເຄື່ອງໃຊ້ທຸກຢ່າງໃຫ້ເຮັດດ້ວຍທອງຄຳບໍລິສຸດໜຶ່ງຕະລັນ[ກ] [40]ຈົ່ງລະວັງເຮັດສິ່ງເຫລົ່າ
ນີ້ຕາມແບບຢ່າງທີ່ເຮົາແຈ້ງແກ່ເຈົ້າເທິງພູເຂົາ.”

# ບົດທີ 26

## ຫໍເຕັນສັກສິດ

[1]“ນອກຈາກນັ້ນ ເຈົ້າຈົ່ງເຮັດຫໍເຕັນສັກສິດດ້ວຍຜ້າກັ້ງສິບຜືນ ເຮັດດ້ວຍຜ້າປ່ານເນື້ອລະອຽດ
ແລະຜ້າຖັກດ້ວຍດ້າຍຍ້ອມສີຟ້າ ສີມ່ວງ ສີແດງເຂັ້ມ ກັບໃຫ້ມີພາບເຄຣຸບຂອງຊ່າງຝີມືອອກ
ແບບໄວ້ [2]ຜ້າກັ້ງຜືນໜຶ່ງໃຫ້ຍາວຊາວແປດສອກ ກວ້າງສີ່ສອກ ຜ້າກັ້ງທຸກຜືນໃຫ້ເທົ່າກັນ [3]ຜ້າ-
ກັ້ງຫ້າຜືນໃຫ້ເກາະຕິດກັນ ແລະອີກຫ້າຜືນນັ້ນກໍໃຫ້ເກາະຕິດກັນດ້ວຍ [4]ຈົ່ງເຮັດຫູຜ້າກັ້ງດ້ວຍ
ດ້າຍສີຟ້າຕິດໄວ້ຕາມຂອບຜ້າກັ້ງດ້ານນອກສຸດຊຸດທີ່ໜຶ່ງ ແລະຕາມຂອບຜ້າກັ້ງດ້ານນອກສຸດ
ຊຸດທີ່ສອງ ຈົ່ງຕິດຫູໄວ້ຄືກັນ [5]ຜ້າກັ້ງຜືນໜຶ່ງໃຫ້ເຮັດຫູຫ້າສິບຫູ ແລະຕາມຂອບຜ້າກັ້ງຊຸດທີ່
ສອງ ໃຫ້ເຮັດຫູຫ້າສິບຫູໃຫ້ຊື່ກັນ [6]ຈົ່ງເຮັດຂໍທອງຄຳຫ້າສິບຂໍສຳລັບໃຊ້ເກາະຜ້າກັ້ງ ເພື່ອໃຫ້
ເປັນຫໍເຕັນສັກສິດດຽວກັນ

[7]ຈົ່ງເຮັດຜ້າກັ້ງດ້ວຍຂົນແບ້ ສຳລັບເປັນເຕັນຄຸມຫໍເຕັນສັກສິດຊັ້ນນອກອີກສິບເອັດຜືນ [8]ຜ້າ-
ກັ້ງຜືນໜຶ່ງໃຫ້ເຮັດຍາວສາມສິບສອກ ກວ້າງສີ່ສອກ ທັງສິບເອັດຜືນໃຫ້ເທົ່າກັນ [9]ຜ້າກັ້ງຫ້າຜືນ
ໃຫ້ເກາະຕິດກັນຕ່າງຫາກ ແລະຜ້າກັ້ງອີກຫົກຜືນໃຫ້ເກາະຕິດກັນຕ່າງຫາກເຊັ່ນກັນ [10]ແລະຜ້າ-
ກັ້ງຜືນທີ່ຫົກນັ້ນ ຈົ່ງຫ້ອຍຊ້ອນລົງມາຂ້າງໜ້າຫໍເຕັນສັກສິດ ເຮັດຫູຫ້າສິບຫູຕິດກັບຂອບຜ້າກັ້ງ

[ກ]ໜຶ່ງຕະລັນນ້ຳໜັກ 35 ກິໂລ

ດ້ານນອກສຸດຊຸດໜຶ່ງ ແລະຫູຫ້າສິບຫູຕິດກັບຂອບຜ້າກັ້ງດ້ານນອກສຸດຊຸດທີ່ສອງ 11ແລ້ວເຮັດ
ຂໍທອງສຳລິດຫ້າສິບຂໍ ເກາະຂໍເຂົ້າທີ່ຫູ ເກາະໃຫ້ຕິດເປັນເຕັນຫລັງດຽວກັນ 12ຜ້າກັ້ງເຕັນສ່ວນ
ທີ່ເກີນຢູ່ ຄືຜ້າກັ້ງເຄິ່ງໜຶ່ງສ່ວນທີ່ເຫລືອຢູ່ນັ້ນ ຈຶ່ງໃຫ້ຫ້ອຍລົງມາດ້ານຫລັງຫໍເຕັນສັກສິດ
13ສ່ວນຜ້າກັ້ງຄຸມຫໍເຕັນສັກສິດ ຊຶ່ງຍາວເກີນໄປຂ້າງລະໜຶ່ງສອກນັ້ນ ໃຫ້ຫ້ອຍລົງມາຂ້າງໆຫໍ-
ເຕັນທັງຂ້າງນີ້ ແລະຂ້າງນັ້ນ ສຳລັບໃຊ້ກຳບັງ

14ເຄື່ອງດາດເຕັນຂ້າງເທິງ ເຈົ້າຈົ່ງເຮັດດ້ວຍໜັງແກະໂຕຜູ້ ຍ້ອມສີແດງຊັ້ນໜຶ່ງ ແລະຄຸມ
ດ້ວຍໜັງທາຄັດ[ກ] ອີກຊັ້ນໜຶ່ງ

15ໄມ້ຂອບສຳລັບເຮັດຝາຫໍເຕັນນັ້ນ ໃຫ້ໃຊ້ໄມ້ກະຖິນເທດຕັ້ງຊື່ຂຶ້ນ 16ໄມ້ຂອບນັ້ນໃຫ້ຍາວ
ແຜ່ນລະສິບສອກ ກວ້າງສອກຄືບ 17ໃຫ້ມີເດືອຍຂອບລະສອງເດືອຍ ເດືອຍຂອບໜຶ່ງມີໄມ້ຂອບ
ນອກຕິດກັບເດືອຍອີກຂອບໜຶ່ງ ໄມ້ຂອບຫໍເຕັນທັງໝົດໃຫ້ເຮັດຢ່າງນີ້ 18ເຈົ້າຈົ່ງເຮັດໄມ້ຂອບຫໍ-
ເຕັນດັ່ງນີ້ ເບື້ອງໃຕ້ໃຫ້ເຮັດຊາວແຜ່ນ 19ຈົ່ງເຮັດຖານຮອງຮັບດ້ວຍເງິນສີ່ສິບຖານສຳລັບໄມ້
ຂອບຊາວແຜ່ນ ກ້ອງໄມ້ຂອບແຜ່ນໜຶ່ງໃຫ້ມີຖານຮອງຮັບແຜ່ນລະສອງຖານ ສຳລັບສວມເດືອຍ
ສອງອັນ 20ເບື້ອງທີ່ສອງຂອງຫໍເຕັນ ເບື້ອງທິດເໜືອນັ້ນ ໃຫ້ໃຊ້ໄມ້ຂອບຊາວແຜ່ນ 21ແລະເຮັດ
ຖານເງິນຮອງຮັບສີ່ສິບຖານ ກ້ອງໄມ້ຂອບໃຫ້ເຮັດຖານແຜ່ນລະສອງຖານ 22ສ່ວນເບື້ອງຫລັງ
ທິດຕາເວັນຕົກຂອງຫໍເຕັນ ໃຫ້ເຮັດໄມ້ຂອບຫົກແຜ່ນ 23ແລະເຮັດອີກສອງແຜ່ນສຳລັບມຸມຫໍເຕັນ
ເບື້ອງຫລັງ 24ໄມ້ຂອບນັ້ນຂ້າງລຸ່ມໃຫ້ແຍກກັນ ແຕ່ຕອນເທິງຍອດໃຫ້ຕິດກັນທີ່ຫູທຳອິດທັງສອງ
ແຫ່ງ ໃຫ້ເຮັດດັ່ງນີ້ກໍຈະເຮັດໃຫ້ເກີດມຸມສອງມຸມ 25ຄືລວມເປັນໄມ້ຂອບແປດແຜ່ນນຳກັນ ແລະ
ຖານເງິນສິບຫົກອັນກ້ອງໄມ້ຂອບໃຫ້ມີຖານຮອງຮັບແຜ່ນລະສອງຖານໄມ້

26ເຈົ້າຈົ່ງເຮັດກອນດ້ວຍໄມ້ກະຖິນເທດຫ້າອັນ ສຳລັບໄມ້ຂອບຝາຫໍເຕັນເບື້ອງໜຶ່ງ 27ແລະ
ກອນອີກຫ້າອັນສຳລັບຄັດໄມ້ຂອບຝາຫໍເຕັນອີກເບື້ອງໜຶ່ງ ແລະກອນອີກຫ້າອັນສຳລັບຄັດໄມ້
ຂອບຝາຫໍເຕັນເບື້ອງຫລັງ ຄືທາງຕາເວັນຕົກ 28ກອນໂຕກາງຄືຢູ່ຕອນກາງຂອງໄມ້ຂອບສຳລັບ
ຄັດຝາຮ້ອຍໃຫ້ຕິດກັນ 29ຈົ່ງຫຸ້ມໄມ້ຂອບເຫລົ່ານັ້ນດ້ວຍທອງຄຳ ແລະເຮັດຫູໄມ້ຂອບດ້ວຍ
ທອງຄຳສຳລັບຮ້ອຍກອນ ແລະກອນນັ້ນໃຫ້ຫຸ້ມດ້ວຍທອງຄຳ 30ຫໍເຕັນນັ້ນ ເຈົ້າຈົ່ງຈັດຕັ້ງໄວ້
ຕາມແບບຢ່າງທີ່ເຮົາໄດ້ແຈ້ງແກ່ເຈົ້າແລ້ວທີ່ເທິງພູເຂົາ

31ຈົ່ງເຮັດຜ້າກັ້ງຜືນໜຶ່ງ ຖັກດ້ວຍດ້າຍສີຟ້າ ສີມ່ວງ ສີແດງເຂັ້ມ ແລະດ້ວຍຜ້າປ່ານເນື້ອລະ-
ອຽດ ໃຫ້ມີຮູບເຄຣຸບຝີມືຊ່າງທີ່ໄດ້ອອກແບບໄວ້ 32ຜ້າກັ້ງນັ້ນໃຫ້ແຂວນໄວ້ດ້ວຍຂໍທອງຄຳຢູ່ເສົາ
ໄມ້ກະຖິນເທດສີ່ເສົາທີ່ຫຸ້ມດ້ວຍທອງຄຳ ແລະຊຶ່ງຕັ້ງຢູ່ເທິງຖານເງິນສີ່ອັນ 33ຜ້າກັ້ງນັ້ນໃຫ້ເຂົາ
ແຂວນໄວ້ກັບຂໍສຳລັບເກາະຜ້າກັ້ງ ແລ້ວເອົາຫີບພຣະບັນຍັດເຂົ້າມາໄວ້ຂ້າງໃນພາຍໃນຜ້າກັ້ງ
ແລະ ຜ້າກັ້ງ ນັ້ນ ຈະ ເປັນ ໂຕ ແບ່ງ ຫໍເຕັນ ສັກສິດ ລະຫວ່າງ ຫ້ອງ ບໍລິສຸດ ກັບ ຫ້ອງ ທີ່ ບໍລິສຸດ ທີ່ ສຸດ
34ພຣະທີ່ນັ່ງກະລຸນານັ້ນໃຫ້ຕັ້ງໄວ້ເທິງຫີບພຣະບັນຍັດໃນຫ້ອງທີ່ບໍລິສຸດທີ່ສຸດ 35ຈົ່ງຕັ້ງໂຕະໄວ້
ນອກຜ້າກັ້ງ ແລະຈົ່ງຕັ້ງຄັນຕະກຽງໄວ້ທາງໃຕ້ໃນຫໍເຕັນກົງກັນຂ້າມກັບໂຕະ ເຈົ້າຈົ່ງຕັ້ງໂຕະໄວ້
ທາງເໜືອ

---

[ກ]ທາຄັດແມ່ນສັດທະເລທີ່ມີໜັງລະອຽດດີ ພາສາອັງກິດ sea cow ຫຼື dugong

[36]ເຈົ້າຈົ່ງເຮັດບັງຕາເບື້ອງປະຕູເຕັນນັ້ນດ້ວຍດ້າຍສີຟ້າ ສີມ່ວງ ສີແດງເຂັ້ມ ແລະດ້ວຍຜ້າ
ປ່ານເນື້ອລະອຽດປະກອບດ້ວຍຝີມືຊ່າງດ້າຍສີ [37]ຈົ່ງເຮັດເສົາຫ້າຕົ້ນດ້ວຍໄມ້ກະຖິນເທດສຳລັບ
ຕິດບັງຕາຢູ່ປະຕູ ແລ້ວຫຸ້ມເສົານັ້ນດ້ວຍທອງຄຳ ຂໍແຂວນເສົາ ຈົ່ງເຮັດດ້ວຍທອງຄຳ ແລ້ວຫລໍ່
ຖານທອງສຳລິດຫ້າຖານສຳລັບຮອງຮັບເສົານັ້ນ”

# ບົດທີ 27

[1]“ເຈົ້າຈົ່ງເຮັດແທ່ນບູຊາດ້ວຍໄມ້ກະຖິນເທດໃຫ້ຍາວຫ້າສອກ ກວ້າງຫ້າສອກ ໃຫ້ເປັນແທ່ນ
ສີ່ຫລ່ຽມມົນທົນ ສູງສາມສອກ [2]ຈົ່ງເຮັດຍອດແທ່ນເປັນຮູບເຂົາສັດຕິດໄວ້ທັງສີ່ມຸມຂອງແທ່ນ
ໃຫ້ເປັນເນື້ອດຽວກັນກັບແທ່ນ ແລະຈົ່ງຫຸ້ມແທ່ນດ້ວຍທອງສຳລິດ [3]ເຈົ້າຈົ່ງປັ້ນໝໍ້ສຳລັບໃສ່ສິ່ງ
ເປິເປື້ອນ ຂີ້ເຖົ່າ ຊ້ວນ ຊາມ ຂໍເກາະເນື້ອ ແລະຖາດຮອງໄຟ ຄືເຄື່ອງໃຊ້ສຳລັບແທ່ນທັງໝົດ
ເຈົ້າຈົ່ງເຮັດດ້ວຍທອງສຳລິດ [4]ແລ້ວເອົາທອງສຳລິດເຮັດຕາຂ່າຍປະດັບແທ່ນນັ້ນ ກັບເຮັດຫູ
ທອງສຳລິດຕິດທີ່ມຸມທັງສີ່ຂອງຕາຂ່າຍ [5]ຕາຂ່າຍນັ້ນໃຫ້ຢູ່ກ້ອງກະຈັງຂອງແທ່ນ ແລະໃຫ້ຫ້ອຍ
ຢູ່ຕັ້ງແຕ່ກາງແທ່ນລົງມາ [6]ໄມ້ຄານຫາມແທ່ນໃຫ້ເຮັດດ້ວຍໄມ້ກະຖິນເທດ ແລະຫຸ້ມດ້ວຍທອງ
ສຳລິດ [7]ໄມ້ຄານນັ້ນໃຫ້ສອດໄວ້ໃນຫູ ໃນເວລາຫາມ ໄມ້ຄານຈະຢູ່ຂ້າງແທ່ນເບື້ອງລະອັນ
[8]ແທ່ນນັ້ນເຮັດດ້ວຍໄມ້ກະດານ (ໄມ້ເປັນໂກນ) ແຕ່ຂ້າງໃນແທ່ນກວ້າງຕາມແບບທີ່ແຈ້ງແກ່ເຈົ້າ
ແລ້ວທີ່ພູເຂົາ ຈົ່ງໃຫ້ເຂົາເຮັດຢ່າງນັ້ນ

[9]ເຈົ້າຈົ່ງສ້າງລານຫໍເຕັນ ໃຫ້ຮົ້ວເບື້ອງໃຕ້ມີຜ້າບັງ ລານນັ້ນເຮັດດ້ວຍຜ້າປ່ານເນື້ອລະອຽດ
ຍາວໜຶ່ງຮ້ອຍສອກ [10]ໃຫ້ມີເສົາຊາວຕົ້ນກັບຖານທອງສຳລິດຮອງຮັບເສົາຊາວຖານ ຂໍຕິດເສົາ
ແລະຮາວຍຶດເສົານັ້ນ ໃຫ້ເຮັດດ້ວຍເງິນ [11]ທຳນອງດຽວກັນ ທາງທິດເໜືອໃຫ້ມີຜ້າບັງຍາວຮ້ອຍ
ສອກ ຄືກັນກັບເສົາຊາວຕົ້ນ ແລະຖານທອງສຳລິດຊາວຖານ ຂໍຕິດເສົາ ແລະເຫລັກຕອກຍຶດ
ເສົານັ້ນ ໃຫ້ເຮັດດ້ວຍເງິນ [12]ຕາມຄວາມກວ້າງຂອງລານທາງທິດຕາເວັນຕົກ ໃຫ້ມີຜ້າບັງຍາວ
ຫ້າສິບສອກ ກັບເສົາສິບຕົ້ນ ແລະຖານຮອງຮັບເສົາສິບຖານ [13]ຄວາມກວ້າງຂອງລານທາງ
ທິດຕາເວັນອອກ ໃຫ້ຍາວຫ້າສິບສອກ [14]ຜ້າບັງຮິມປະຕູຂ້າງໜຶ່ງໃຫ້ຍາວສິບຫ້າສອກ ມີເສົາ
ສາມຕົ້ນ ແລະຖານຮອງຮັບເສົາສາມຖານ [15]ອີກຂ້າງໜຶ່ງໃຫ້ມີຜ້າບັງຍາວສິບຫ້າສອກ ມີເສົາ
ສາມຕົ້ນ ແລະຖານຮອງຮັບເສົາສາມຖານ [16]ໃຫ້ມີຜ້າບັງຕາທີ່ປະຕູລານຍາວຊາວສອກ ຜ້າສີ-
ຟ້າ ສີມ່ວງ ສີແດງເຂັ້ມ ແລະຜ້າປ່ານເນື້ອລະອຽດ ປະກອບດ້ວຍສີມືຂອງຊ່າງດ້າຍສີ ກັບເສົາ
ສີ່ຕົ້ນ ແລະຖານຮອງຮັບເສົາສີ່ຖານ [17]ເສົາອ້ອມຮອບລານທັງໝົດ ໃຫ້ມີເຫລັກຕອກສຳລັບຍຶດ
ເສົາໃຫ້ຕິດຕໍ່ກັນ ເຮັດດ້ວຍເງິນ ແລະໃຫ້ເຮັດຂໍດ້ວຍເງິນ ຖານຮອງຮັບເສົານັ້ນເຮັດດ້ວຍທອງ
ສຳລິດ [18]ຄວາມຍາວຂອງລານນັ້ນຈະເປັນຮ້ອຍສອກ ຄວາມກວ້າງຫ້າສິບສອກ ສູງຫ້າສອກ
ກັ້ນດ້ວຍຜ້າປ່ານເນື້ອລະອຽດ ແລະມີຖານທອງສຳລິດ [19]ເຄື່ອງໃຊ້ສອຍທັງປວງຂອງຫໍເຕັນ
ພ້ອມທັງຫລັກໝຸດຂອງຫໍເຕັນ ກັບຫລັກໝຸດສຳລັບຮົ້ວທີ່ກັ້ນລານທັງໝົດ ໃຫ້ເຮັດດ້ວຍທອງສຳ-
ລິດ

[20]ເຈົ້າຈົ່ງສັ່ງຊົນຊາດອິສຣາເອນໃຫ້ນຳນ້ຳມັນໝາກກອກເທດບໍລິສຸດທີ່ຄັ້ນໄວ້ນັ້ນມາສຳລັບ

ເຕີມຕະກຽງ ເພື່ອຈະໃຫ້ຕະກຽງນັ້ນສ່ອງສະຫວ່າງຢູ່ສະເໝີ [21]ໃນຫໍເຕັນແຫ່ງຊຸມນຸມທາງນອກ
ຜ້າກັ້ງ ຊຶ່ງຢູ່ໜ້າຫີບພຣະບັນຍັດ ໃຫ້ອາໂຣນ ແລະລູກຊາຍຂອງອາໂຣນ ເບິ່ງແຍງຕະກຽງນັ້ນ
ຢູ່ຈຳເພາະພຣະພັກພຣະຜູ້ເປັນເຈົ້າ ຕັ້ງແຕ່ເວລາຫົວຄ່ຳຈົນເຖິງຮຸ່ງເຊົ້າ ໃຫ້ເປັນກົດເກນທີ່ຊົນ
ຊາດອິສຣາເອນຕ້ອງປະຕິບັດຕາມຊົ່ວອາຍຸຂອງເຂົາ

# ບົດທີ 28

[1]"ຈົ່ງນຳອາໂຣນອ້າຍຂອງເຈົ້າກັບລູກຊາຍຂອງລາວ ແຍກອອກມາຈາກໝູ່ຊົນຊາດອິສຣາ-
ເອນ ໃຫ້ມາຢູ່ໃກ້ເຈົ້າ ເພື່ອຈະໃຫ້ບົວລະບັດເຮົາໃນຕຳແໜ່ງປະໂລຫິດ ຄືທັງອາໂຣນກັບລູກ
ຊາຍຂອງອາໂຣນ ຄືນາດາບ ອາບີຮູ ເອເລອາຊາ ກັບອິທາມາ [2]ແລ້ວໃຫ້ເຮັດເຄື່ອງຍົດບໍລິ-
ສຸດສຳລັບອາໂຣນອ້າຍຂອງເຈົ້າໃຫ້ສົມກຽດ ແລະງົດງາມ [3]ໃຫ້ກ່າວແກ່ຄົນທັງປວງຜູ້ສະຫລຽວ
ສະຫລາດ ຊຶ່ງເຮົາໄດ້ບັນດານໃຫ້ເຂົາມີຈິດໃຈອັນປະກອບດ້ວຍສະຕິປັນຍານັ້ນ ໃຫ້ເຂົາເຮັດ
ເຄື່ອງຍົດສຳລັບສະຖາປະນາອາໂຣນໃຫ້ບົວລະບັດເຮົາໃນຕຳແໜ່ງປະໂລຫິດ.

## ເຄື່ອງຍົດຂອງພວກປະໂລຫິດ

[4]ໃຫ້ເຂົາເຮັດເຄື່ອງຍົດດັ່ງຕໍ່ໄປນີ້ ຄືທັບຊວງ ເສື້ອເອໂຟດ ເສື້ອຄຸມ ເສື້ອຕາດມຸດ ຜ້າມາລາ
ແລະສາຍຮັດແອວ ແລະໃຫ້ເຂົາເຮັດເຄື່ອງຍົດບໍລິສຸດສຳລັບອາໂຣນອ້າຍຂອງເຈົ້າ ແລະລູກ
ຊາຍຂອງເຂົາ ເພື່ອຈະໃຫ້ບົວລະບັດເຮົາໃນຕຳແໜ່ງປະໂລຫິດ [5]ໃຫ້ເຂົາເຫລົ່ານັ້ນຮັບເອົາ
ທອງຄຳ ດ້າຍສີຟ້າ ສີມ່ວງ ສີແດງເຂັ້ມ ແລະຜ້າປ່ານເນື້ອລະອຽດ

[6]ໃຫ້ເຂົາເຮັດເອໂຟດ[ກ] ດ້ວຍທອງຄຳ ດ້ວຍດ້າຍສີຟ້າ ສີມ່ວງ ສີແດງເຂັ້ມ ແລະຜ້າປ່ານ
ເນື້ອລະອຽດ ຕັດດ້ວຍຝີມືຊ່າງອອກແບບ [7]ແຖບທີ່ຜູກບ່າຂອງເອໂຟດນັ້ນ ໃຫ້ຕິດກັບຣິມຕອນ
ເທິງທັງສອງສ່ວນ ເພື່ອຈະຕິດເປັນອັນດຽວກັນ [8]ໃຫ້ຖັກສາຍຮັດຢ່າງປະນີດ ສຳລັບຄາດທັບ
ເອໂຟດ ໃຫ້ເຮັດດ້ວຍຊ່າງຝີມືຢ່າງດຽວກັນ ແລະໃຊ້ວັດຖຸຢ່າງດຽວກັບເອໂຟດ ຄືເຮັດດ້ວຍ
ທອງຄຳ ດ້າຍສີຟ້າ ສີມ່ວງ ສີແດງເຂັ້ມ ແລະຜ້າປ່ານເນື້ອລະອຽດ

[9]ແລ້ວໃຫ້ໃຊ້ພອຍສີນ້ຳເຂົ້າສອງແຜ່ນ ສຳລັບຈາລຶກຊື່ລູກຂອງອິສຣາເອນໄວ້ [10]ພອຍແຜ່ນ
ທີໜຶ່ງໃຫ້ຈາລຶກຊື່ຫົກຊື່ ແລະແຜ່ນທີ່ສອງກໍໃຫ້ຈາລຶກຊື່ໄວ້ອີກຫົກຊື່ທີ່ເຫລືອຢູ່ຕາມກຳເນີດ [11]ໃຫ້
ຊ່າງແກະຈາລຶກຊື່ບັນດາລູກອິສຣາເອນໄວ້ທີ່ພອຍທັງສອງແຜ່ນນັ້ນ ຢ່າງດຽວກັນກັບແກະຕາ
ແລ້ວຝັງໄວ້ເທິງກະໂປກທອງຄຳ ຊຶ່ງມີລວດລາຍລະອຽດ [12]ພອຍທັງສອງແຜ່ນນັ້ນໃຫ້ຕິດໄວ້
ກັບເອໂຟດເທິງບ່າທັງສອງຂ້າງ ພອຍນັ້ນຈະເປັນທີ່ລະນຶກເຖິງບັນດາລູກແຫ່ງອິສຣາເອນ
ແລະອາໂຣນຈະແບກຊື່ເຂົາທັງຫລາຍໄວ້ເທິງບ່າທັງສອງຈຳເພາະພຣະພັກພຣະຜູ້ເປັນເຈົ້າເປັນ
ທີ່ລະນຶກ [13]ເຈົ້າຈົ່ງເຮັດກະໂປກ (ກາຕິດຫນ້າເອິກ) ທອງຄຳມີລວດລາຍລະອຽດສຳລັບເປັນ
ເຄື່ອງໝາຍຕຳແຫນ່ງ [14]ກັບເຮັດສາຍສ້ອຍສອງສາຍດ້ວຍທອງຄຳບໍລິສຸດ ເປັນສະຫລ້ອຍຖັກ
ກຽວ ແລ້ວຕິດໄວ້ທີ່ກະໂປກນັ້ນ

[15]ຈົ່ງເຮັດທັບຊວງແຫ່ງການພິພາກສາ ດ້ວຍຝີມືຊ່າງທີ່ອອກແບບເຮັດເອໂຟດຄືເຮັດດ້ວຍ

[ກ]ເອໂຟດເປັນເສື້ອແສ່ວຂອງປະໂລຫິດ

ທອງຄຳ ດ້າຍສີຟ້າ ສີມ່ວງ ສີແດງເຂັ້ມ ແລະຜ້າປ່ານເນື້ອລະອຽດ 16ໃຫ້ເຮັດທັບຊວງເປັນຮູບ
ສີ່ຫລ່ຽມຈະຕຸລັດ ພັບທົບກາງ ຍາວຄືບໜຶ່ງ ກວ້າງຄືບໜຶ່ງ 17ຈົ່ງຝັງພອຍສີ່ແຖວເທິງທັບຊວງ
ນັ້ນ ແຖວທີ່ໜຶ່ງຝັງທັບທິມ ລູກລາຄຳ ແລະພອຍສີແດງເຂັ້ມ 18ແຖວທີ່ສອງຝັງມໍລະກົດ ມະນີ-
ໄຊດ ແລະເພັດ 19ແຖວທີ່ສາມຝັງນິນ ໂມລາ ແລະພອຍສີມ່ວງ 20ແຖວທີ່ສີ່ຝັງພອຍຂຽວ
ພອຍສີນ້ຳເຂົ້າ ແລະພອຍສີນ້ຳຕານ ພອຍທັງໝົດນີ້ໃຫ້ຝັງໃນລວດລາຍອັນລະອຽດທີ່ເຮັດດ້ວຍ
ທອງຄຳ 21ພອຍເຫລົ່ານັ້ນໃຫ້ມີຊື່ບັນດາລູກອິສຣາເອນສິບສອງຊື່ຈາລຶກໄວ້ເຊັ່ນດຽວກັນກັບ
ແກະຕາ ຈະມີຊື່ຕະກຸນທຸກຕະກຸນຕາມລຳດັບສິບສອງຕະກຸນ

22ແລະເຈົ້າຈົ່ງເຮັດສາຍສ້ອຍ[ກ] ຖັກກຽວດ້ວຍທອງຄຳບໍລິສຸດສຳລັບທັບຊວງ 23ແລະເຈົ້າຈົ່ງ
ເຮັດຫູທອງຄຳສອງຫູຕິດໄວ້ທີ່ມຸມເທິງທັງສອງຂອງທັບຊວງ 24ສ່ວນສາຍສ້ອຍທີ່ເຮັດດ້ວຍ
ທອງຄຳນັ້ນ ໃຫ້ເກາະດ້ວຍຫູທີ່ມຸມທັບຊວງ 25ແລະປາຍສາຍສ້ອຍອີກສອງຂ້າງໃຫ້ຕິດກັບກະ-
ໂບກທີ່ມີລວດລາຍລະອຽດ ທັງສອງໃຫ້ຕິດໄວ້ທາງໜ້າແຖບຍຶດ ເອໂຟດ ທັງສອງຂ້າງເທິງບ່າ
26ຈົ່ງເຮັດຫູທອງຄຳສອງອັນຕິດໄວ້ທີ່ມຸມລຸ່ມທັງສອງຂ້າງຂອງທັບຊວງ ທາງໃນທີ່ຕິດ ເອໂຟດ
27ຈົ່ງເຮັດແຫວນຄຳອີກສອງວົງຜູກຕິດກັນກັບທາງລຸ່ມຂອງສາຍດຶງ ທັງສອງຂ້າງທາງໜ້າບ່າ
ໄຫລ່ຂອງເສື້ອຄຸມ ເອໂຟດ. 28ໃຫ້ຜູກທັບຊວງນັ້ນຕິດກັບ ເອໂຟດ ໂດຍໃຊ້ດ້າຍຖັກສີຟ້າຮ້ອຍ
ຜູກທີ່ຫູ ໃຫ້ທັບຊວງທັບສາຍຮັດທີ່ເຮັດດ້ວຍຊ່າງຝີມືປະນີດຂອງ ເອໂຟດ ເພື່ອບໍ່ໃຫ້ທັບຊວງ
ຫລຸດໄປຈາກ ເອໂຟດ 29ອາໂຣນຈຶ່ງຈະມີຊື່ບັນດາລູກອິສຣາເອນຈາລຶກໄວ້ທີ່ທັບຊວງແຫ່ງການ
ພິພາກສາ ຕິດໄວ້ທີ່ຫົວໃຈຂອງຕົນ ໃຫ້ເປັນທີ່ລະນຶກຕໍ່ພຣະພັກພຣະຜູ້ເປັນເຈົ້າສະເໝີ ເມື່ອ
ລາວເຂົ້າໄປໃນຫ້ອງທີ່ບໍລິສຸດນັ້ນ

30ຈົ່ງໃສ່ ອູຣິມ ແລະ ທູມມິມ ໄວ້ໃນທັບຊວງແຫ່ງການພິພາກສາ ແລະຂອງສອງສິ່ງນີ້ຈະຢູ່ທີ່
ຫົວໃຈຂອງອາໂຣນ ເມື່ອເຂົ້າເຝົ້າພຣະຜູ້ເປັນເຈົ້າອາໂຣນຈະຮັບພາລະການພິພາກສາບັນດາລູກ
ອິສຣາເອນໄວ້ທີ່ຫົວໃຈຂອງຕົນສະເໝີຈຳເພາະພຣະພັກພຣະຜູ້ເປັນເຈົ້າ

31ເຈົ້າຈົ່ງເຮັດເສື້ອຄຸມໃຫ້ເຂົ້າຊຸດກັບ ເອໂຟດ ດ້ວຍຜ້າສີຟ້າລ້ວນ 32ໃຫ້ເຮັດຮູຄໍກາງຜືນເສື້ອ
ແລ້ວແຂບຮອບຄໍເຮັດດ້ວຍຜ້າຖັກ ເຊັ່ນດຽວກັບຄໍເສື້ອທະຫານ ເພື່ອຈະບໍ່ໃຫ້ຂາດ 33ລຸ່ມຂອງ
ເສື້ອຄຸມໃຫ້ປັກຮູບທັບທິມ ໃຊ້ດ້າຍສີຟ້າ ສີມ່ວງ ສີແດງເຂັ້ມຮອບເສື້ອ ແລະຕິດໝາກກະດິ່ງ
ທອງຄຳສະຫລັບກັບທັບທິມ 34ໝາກກະດິ່ງທອງຄຳໜ່ວຍໜຶ່ງ ກັບທັບທິມໜຶ່ງໜ່ວຍ ໝາກກະ
ດິ່ງທອງຄຳອີກໜ່ວຍໜຶ່ງ ກັບທັບທິມອີກໜ່ວຍໜຶ່ງ ຮອບລຸ່ມຂອງເສື້ອຄຸມ 35ອາໂຣນຈະສວມ
ເສື້ອໂຕນັ້ນເມື່ອເຮັດວຽກບົວລະບັດແລະຈະໄດ້ຍິນສຽງໝາກກະດິ່ງ ເມື່ອເຂົ້າເຝົ້າພຣະຜູ້ເປັນ-
ເຈົ້າໃນທີ່ບໍລິສຸດ ແລະເມື່ອຍ່າງອອກມາ ດ້ວຍຢ້ານວ່າລາວຈະຕ້ອງຕາຍ

36ເຈົ້າຈົ່ງເຮັດແຜ່ນທອງຄຳບໍລິສຸດຈາລຶກຄຳວ່າ 'ບໍລິສຸດແກ່ພຣະຜູ້ເປັນເຈົ້າ' ໄວ້ເໝືອນຢ່າງ
ແກະຕາ 37ແລະເຈົ້າຈົ່ງເອົາດ້າຍຖັກສີຟ້າ ຜູກແຜ່ນທອງຄຳນັ້ນໄວ້ເທິງມາລາ ໃຫ້ຢູ່ທາງຂ້າງ
ມາລາດ້ານໜ້າ 38ແຜ່ນທອງຄຳນັ້ນຈະຢູ່ທີ່ໜ້າຜາກຂອງອາໂຣນ ແລະອາໂຣນຈະຮັບຄວາມ
ຊົ່ວຊ້າອັນເກີດແກ່ຊົນຊາດອິສຣາເອນ ເນື່ອງຈາກຂອງຖວາຍອັນບໍລິສຸດ ຊຶ່ງນຳມາຊຳລະໃຫ້

[ກ]ຜ້າບ່ຽງ

ເປັນຂອງຖວາຍອັນບໍລິສຸດ ແລະແຜ່ນທອງຄຳນັ້ນໃຫ້ຢູ່ທີ່ໜ້າຜາກຂອງອາໂຣນສະເໝີ ເພື່ອສິ່ງ
ຂອງເຫລົ່ານັ້ນຈະເປັນທີ່ພໍພຣະໄທຕໍ່ພຣະພັກພຣະຜູ້ເປັນເຈົ້າ [39]ຈົ່ງຖັກເສື້ອໃຫ້ເປັນລວດລາຍ
ດ້ວຍຜ້າປ່ານເນື້ອລະອຽດ ສ່ວນຜ້າມາລານັ້ນ ຈົ່ງເຮັດດ້ວຍຜ້າປ່ານເນື້ອລະອຽດ ແລະເຮັດ
ສາຍຮັດດ້ວຍຝີມືຊ່າງດ້າຍສີ

[40]ຈົ່ງເຮັດເສື້ອ ສາຍຮັດ ແລະມາລາສຳລັບລູກຊາຍທັງຫລາຍຂອງອາໂຣນໃຫ້ສົມກຽດ
ແລະງົດງາມ

[41]ຈົ່ງແຕ່ງຕົວອາໂຣນອ້າຍຂອງເຈົ້າ ແລະລູກຊາຍທັງຫລາຍຂອງລາວດ້ວຍເຄື່ອງຍົດ ແລ້ວ
ເຈີມ ແລະສະຖາປະນາ ແລະຊຳລະລາວໃຫ້ບໍລິສຸດ ເພື່ອຈະໃຫ້ບົວລະບັດເຮົາໃນຕຳແໜ່ງປະ-
ໂລຫິດ [42]ຈົ່ງຫຍິບໂສ້ງໃຫ້ພວກເຂົາເຫລົ່ານັ້ນດ້ວຍຜ້າປ່ານ ເພື່ອຈະປົກປິດກາຍທີ່ເປືອຍຂອງ
ພວກເຂົາ ໃຫ້ຍາວຕັ້ງແຕ່ແອວຈົນເຖິງຕົ້ນຂາ [43]ໃຫ້ອາໂຣນກັບລູກຊາຍທັງຫລາຍຂອງລາວ
ສວມໃສ່ເມື່ອເຂົ້າໄປໃນຫໍເຕັນແຫ່ງຊຸມນຸມ ແລະເມື່ອເຂົ້າໃກ້ແທ່ນບູຊາ ເວລາຈະບົວລະບັດໃນທີ່
ບໍລິສຸດ ຢ້ານວ່າລາວຈະເຮັດບາບ ແລະເຖິງຕາຍ ເລື່ອງນີ້ໃຫ້ເປັນກົດເກນທີ່ລາວ ແລະເຊື້ອ-
ສາຍຂອງລາວທີ່ມາພາຍຫລັງຕ້ອງປະຕິບັດຕາມຕະຫລອດໄປ

# ບົດທີ 29

[1]"ຕໍ່ໄປນີ້ເປັນການ ຊຶ່ງເຈົ້າຄວນກະທຳເພື່ອຊຳລະພວກເຂົາທັງຫລາຍໃຫ້ບໍລິສຸດ ເພື່ອເຂົາຈະ
ບົວລະບັດເຮົາໃນຕຳແໜ່ງປະໂລຫິດ ຄືຈົ່ງເອົາງົວໜຸ່ມໂຕໜຶ່ງ ແລະແກະໂຕຜູ້ສອງໂຕຊຶ່ງປາດ
ສະຈາກຕຳໜິ [2]ເຂົ້າຈີ່ບໍ່ມີເຊື້ອແປ້ງ ເຂົ້າຈີ່ບໍ່ມີເຊື້ອແປ້ງນວດດ້ວຍນ້ຳມັນແລະເຂົ້າຈີ່ແຜ່ນບາງບໍ່
ມີເຊື້ອແປ້ງທານ້ຳມັນ ເຂົ້າຈີ່ເຫລົ່ານີ້ຈົ່ງເຮັດດ້ວຍຍອດແປ້ງເຂົ້າຈີ່. [3]ແລ້ວຈົ່ງໃສ່ເຂົ້າຈີ່ຕ່າງໆ
ເຫລົ່ານັ້ນໄວ້ໃນກະຕ່າດຽວກັນ ຈົ່ງນຳມາໃນກະຕ່າພ້ອມກັບງົວໂຕຜູ້ ແລະລູກແກະໂຕຜູ້ສອງ
ໂຕມາເຜົາຖວາຍ

[4]ຈົ່ງນຳອາໂຣນແລະລູກຊາຍທັງຫລາຍຂອງລາວມາທີ່ປະຕູຫໍເຕັນແຫ່ງຊຸມນຸມ ແລ້ວຈົ່ງຊຳ-
ລະຕົວເຂົາທັງຫລາຍດ້ວຍນ້ຳ [5]ຈົ່ງສວມເຄື່ອງຍົດໃຫ້ອາໂຣນ ຄືເສື້ອໃນກັບເສື້ອເອໂຟດກັບ
ເອໂຟດ ແລະທັບຊວງ ແລະເອົາສາຍຮັດທີ່ຕ່ຳດ້ວຍຝີມືປະນີດ ສຳລັບໃຊ້ກັບເອໂຟດນັ້ນຄາດ
ແອວໄວ້ [6]ຈົ່ງສວມຜ້າມາລາທີ່ຫົວຂອງອາໂຣນ ແລະຈົ່ງສວມມົງກຸດບໍລິສຸດທັບມາລາ [7]ຈົ່ງເອົາ
ນ້ຳມັນເຈີມຖອກລົງເທິງຫົວຂອງລາວ ແລະແຕ່ງຕັ້ງເຂົາໄວ້ [8]ຈົ່ງນຳລູກຊາຍທັງຫລາຍຂອງ
ລາວມາ ແລະສວມເສື້ອໃຫ້ [9]ແລ້ວຈົ່ງເອົາສາຍຮັດຄາດແອວພວກເຂົາໄວ້ ທັງຕົວອາໂຣນເອງ
ແລະລູກຊາຍຂອງລາວ ແລະຄາດມາລາໃຫ້ລາວ ແລ້ວລາວກໍຈະຮັບຕຳແໜ່ງເປັນປະໂລຫິດ
ຕາມກົດເກນ ດັ່ງນີ້ແຫລະ ເຈົ້າຈົ່ງສະຖາປະນາອາໂຣນ ແລະລູກຊາຍທັງຫລາຍຂອງລາວໄວ້

[10]ເຈົ້າຈົ່ງນຳງົວໂຕຜູ້ມາທີ່ໜ້າຫໍເຕັນແຫ່ງຊຸມນຸມໃຫ້ອາໂຣນກັບລູກຊາຍຂອງລາວເອົາມືວາງ
ລົງເທິງຫົວງົວໂຕຜູ້ນັ້ນ [11]ແລ້ວຈົ່ງຂ້າງົວໂຕຜູ້ນັ້ນຕໍ່ພຣະພັກພຣະຜູ້ເປັນເຈົ້າທີ່ປະຕູຫໍເຕັນແຫ່ງ
ຊຸມນຸມ [12]ຈົ່ງເອົານິ້ວມືຈຸ່ມເລືອດງົວໂຕຜູ້ນັ້ນ ທາໄວ້ທີ່ເຂົາແທ່ນສ່ວນເລືອດທີ່ເຫລືອທັງໝົດຈົ່ງ
ຖອກໄວ້ທີ່ພື້ນແທ່ນບູຊາ [13]ເຈົ້າຈົ່ງເອົາໄຂມັນທັງໝົດທີ່ຫຸ້ມເຄື່ອງໃນ ສ່ວນນອກຂອງຕັບ ແລະ

ໝາກໄຂ່ຫລັງທັງສອງກັບໄຂມັນທີ່ຕິດໜາກໄຂ່ຫລັງນັ້ນມາເຜົາເທິງແທ່ນ 14ແຕ່ຊີ້ນກັບໜັງ
ແລະຂີ້ຂອງງົວໂຕຜູ້ນັ້ນ ຈົ່ງເຜົາໄຟເສຍຢູ່ນອກຄ້າຍ ທັງນີ້ເປັນເຄື່ອງບູຊາໄຖ່ບາບ
15ເຈົ້າຈົ່ງນຳແກະຜູ້ໂຕໜຶ່ງມາ ໃຫ້ອາໂຣນກັບລູກຊາຍລາວເອົາມືຂອງຕົນວາງເທິງຫົວແກະ
ໂຕຜູ້ນັ້ນ 16ແລ້ວຈົ່ງຂ້າແກະໂຕນັ້ນເສຍ ເອົາເລືອດພົມອ້ອມຮອບແທ່ນ 17ຈົ່ງຕັດແກະໂຕນັ້ນ
ອອກເປັນທ່ອນໆ ແລະເຄື່ອງໃນກັບຂາຈົ່ງລ້າງນ້ຳວາງໄວ້ກັບຊີ້ນແລະຫົວ 18ແລ້ວຈົ່ງເຜົາແກະ
ໂຕນັ້ນທັງໂຕເທິງແທ່ນບູຊາ ເປັນເຄື່ອງເຜົາບູຊາຖວາຍແກ່ພຣະຜູ້ເປັນເຈົ້າ ເປັນກິ່ນທີ່ພໍພຣະ-
ໄທ ເປັນເຄື່ອງບູຊາດ້ວຍໄຟຖວາຍແກ່ພຣະຜູ້ເປັນເຈົ້າ
19ເຈົ້າຈົ່ງນຳແກະໂຕຜູ້ອີກໂຕໜຶ່ງມາ ແລ້ວໃຫ້ອາໂຣນກັບລູກຊາຍລາວເອົາມືຂອງຕົນວາງ
ເທິງຫົວແກະຜູ້ໂຕນັ້ນ 20ແລ້ວເຈົ້າຈົ່ງຂ້າແກະໂຕນັ້ນເສຍ ເອົາເລືອດສ່ວນໜຶ່ງເຈີມທີ່ປາຍໃບຫູ
ຂ້າງຂວາຂອງອາໂຣນ ແລະທີ່ປາຍໃບຫູຂ້າງຂວາຂອງລູກຊາຍຂອງພວກເຂົາທຸກຄົນ ແລະທີ່
ຫົວໂປ້ມືຂ້າງຂວາ ແລະທີ່ຫົວໂປ້ຕີນຂ້າງຂວາຂອງພວກເຂົານຳ ແລ້ວຈົ່ງເອົາເລືອດທີ່ເຫລືອ
ຫົດສົງອ້ອມຮອບແທ່ນບູຊາ 21ຈົ່ງເອົາເລືອດສ່ວນໜຶ່ງທີ່ຢູ່ເທິງແທ່ນ ແລະນ້ຳມັນເຈີມນັ້ນພົມ
ອາໂຣນແລະເຄື່ອງຍົດຂອງລາວ ຈົ່ງຫົດສົງ ລູກຊາຍທັງຫລາຍຂອງລາວ ແລະເຄື່ອງຍົດຂອງ
ລູກຊາຍເຫລົ່ານັ້ນດ້ວຍ ອາໂຣນແລະເຄື່ອງຍົດຂອງລາວຈະບໍລິສຸດລວມທັງລູກຊາຍຂອງລາວ
ແລະເຄື່ອງຍົດຂອງພວກເຂົາດ້ວຍ
22ເຈົ້າຈົ່ງເອົາໄຂມັນແກະໂຕຜູ້ ແລະຫາງທີ່ເປັນໄຂມັນ ກັບໄຂມັນທີ່ຕິດເຄື່ອງໃນ ແລະສ່ວນ
ນອກຂອງຕັບ ກັບໝາກໄຂ່ຫລັງທັງສອງ ແລະໄຂມັນທີ່ຕິດຢູ່ກັບໝາກໄຂ່ຫລັງ ກັບຕົ້ນຂາຂ້າງ
ຂວາດ້ວຍ ເພາະເປັນແກະໃຊ້ສຳລັບການສະຖາປະນາ 23ກັບເຂົ້າຈີ່ກ້ອນໜຶ່ງ ແລະເຂົ້າຈີ່ນວດ
ດ້ວຍນ້ຳມັນແຜ່ນໜຶ່ງ ແລະເຂົ້າຈີ່ບາງແຜ່ນໜຶ່ງຈາກກະຕ່າເຂົ້າຈີ່ມາເປັນເຊື້ອແປ້ງ ຊຶ່ງຢູ່ຕໍ່ພຣະ-
ພັກພຣະຜູ້ເປັນເຈົ້າ 24ແລ້ວຈົ່ງວາງສິ່ງເຫລົ່ານັ້ນໄວ້ໃນມືຂອງອາໂຣນ ແລະໃນມືລູກຊາຍຂອງ
ລາວ ໃຫ້ແກວ່ງໄປແກວ່ງມາເປັນເຄື່ອງບູຊາຖວາຍຕໍ່ພຣະພັກພຣະຜູ້ເປັນເຈົ້າ 25ແລ້ວຈົ່ງຮັບສິ່ງ
ເຫລົ່ານີ້ຈາກມືຂອງລາວນຳໄປເຜົາເທິງແທ່ນບູຊາເປັນເຄື່ອງເຜົາບູຊາ ເປັນກິ່ນທີ່ພໍພຣະໄທຕໍ່
ພຣະພັກພຣະຜູ້ເປັນເຈົ້າ ເປັນເຄື່ອງບູຊາດ້ວຍໄຟຖວາຍແກ່ພຣະຜູ້ເປັນເຈົ້າ 26ຈົ່ງເອົາຊີ້ນຢູ່
ເອິກແກະໂຕຜູ້ຊຶ່ງເປັນແກະສະຖາປະນາອາໂຣນ ແລ້ວໃຫ້ແກວ່ງໄປແກວ່ງມາເປັນເຄື່ອງບູຊາ
ຖວາຍຕໍ່ພຣະພັກພຣະຜູ້ເປັນເຈົ້າ ແລະນັ້ນຈະເປັນສ່ວນຂອງເຈົ້າ 27ແລະຈົ່ງເອົາຊີ້ນຢູ່ເອິກ
ແກະໂຕຜູ້ຊຶ່ງເປັນເຄື່ອງບູຊານັ້ນໄວ້ ແລະຊີ້ນຕົ້ນຂາອັນເປັນສ່ວນຍົກໃຫ້ແກ່ປະໂລຫິດຊຶ່ງແກວ່ງ
ໄປແກວ່ງມາ ແລະເປັນຂອງຖວາຍຈາກແກະໃຊ້ສຳລັບການສະຖາປະນາ ດ້ວຍເປັນສ່ວນຂອງ
ອາໂຣນແລະລູກຊາຍລາວ 28ນັ້ນແຫລະ ເປັນສ່ວນຊຶ່ງອາໂຣນແລະລູກຊາຍລາວຈະໄດ້ຮັບ
ຈາກຊົນຊາດອິສຣາເອນເປັນກົດເກນ ເພາະເປັນສ່ວນທີ່ຍົກໃຫ້ແກ່ປະໂລຫິດ ແລະຊົນຊາດອິ-
ສຣາເອນຈະຍົກໃຫ້ຈາກເຄື່ອງສັນຕິບູຊາ ເປັນເຄື່ອງບູຊາຂອງລາວຖວາຍແກ່ພຣະຜູ້ເປັນເຈົ້າ
29ເຄື່ອງຍົດບໍລິສຸດຂອງອາໂຣນຈະເປັນຂອງລູກຊາຍຂອງລາວຕໍ່ໆໄປ ໃຫ້ລາວສວມໃສ່ເມື່ອ
ລາວຮັບການເຈີມ ແລະໄດ້ຮັບການສະຖາປະນາໄວ້ໃນຕຳແໜ່ງ 30ຈົ່ງໃຫ້ລູກຊາຍຊຶ່ງຈະເປັນ
ປະໂລຫິດແທນລາວນັ້ນສວມ ໃສ່ເຄື່ອງຍົດເຫລົ່ານັ້ນຄົບເຈັດມື້ ຂະນະທີ່ລາວມາຍັງຫໍເຕັນແຫ່ງ

ຊຸມນຸມເພື່ອບົວລະບັດໃນທີ່ບໍລິສຸດ
[31]ຈົ່ງຕົ້ມຊີ້ນແກະໂຕຜູ້ສຳລັບການສະຖາປະນາໃນທີ່ບໍລິສຸດ [32]ແລ້ວໃຫ້ອາໂຣນກັບລູກຊາຍ
ຂອງລາວກິນຊີ້ນແກະໂຕຜູ້ນັ້ນ ແລະເຂົ້າຈີ່ຊຶ່ງຢູ່ໃນກະຕ່າທີ່ປະຕູຫໍເຕັນແຫ່ງຊຸມນຸມ [33]ໃຫ້ລາວ
ກິນຂອງຊຶ່ງນຳມາບູຊາລຶບລ້າງບາບ ເພື່ອຈະສະຖາປະນາ ແລະຊຳລະຄົນເຫລົ່ານັ້ນໃຫ້ບໍລິສຸດ
ແຕ່ຄົນພາຍນອກຢ່າໃຫ້ຮັບປະທານ ເພາະເປັນຂອງບໍລິສຸດ [34]ແລະຖ້າແມ່ນຊີ້ນທີ່ໃຊ້ໃນພິທີສະ-
ຖາປະນາ ແລະເຂົ້າຈີ່ນັ້ນຍັງເຫລືອຢູ່ຈົນຮຸ່ງເຊົ້າ ກໍໃຫ້ເຜົາສ່ວນທີ່ເຫລືອນັ້ນດ້ວຍໄຟເສຍ ຢ່າໃຫ້
ຮັບປະທານເພາະເປັນຂອງບໍລິສຸດ
[35]ດັ່ງນັ້ນແຫລະ ເຈົ້າຈົ່ງເຮັດໃຫ້ແກ່ອາໂຣນ ແລະລູກຊາຍລາວຕາມຄຳທີ່ເຮົາໄດ້ບັນຊາເຈົ້າ
ໄວ້ ຈົ່ງເຮັດພິທີສະຖາປະນາພວກເຂົາໃຫ້ຄົບເຈັດມື້ [36]ຈົ່ງນຳງົວເຖິກໂຕໜຶ່ງມາຖວາຍທຸກໆວັນ
ເປັນເຄື່ອງບູຊາໄຖ່ບາບ ເພື່ອການລຶບລ້າງບາບ ແລະຈົ່ງຊຳລະແທ່ນບູຊາ ດ້ວຍການລຶບລ້າງ
ມົນທິນຂອງແທ່ນນັ້ນ ຈົ່ງເຈີມແທ່ນນັ້ນເພື່ອຈະຊຳລະໃຫ້ບໍລິສຸດ [37]ຈົ່ງເຮັດການລຶບລ້າງມົນທິນ
ແທ່ນນັ້ນຄົບເຈັດມື້ ແລະຊຳລະແທ່ນນັ້ນໃຫ້ບໍລິສຸດ ແລ້ວແທ່ນນັ້ນຈະບໍລິສຸດທີ່ສຸດ ສິ່ງໜຶ່ງສິ່ງ
ໃດທີ່ຖືກຕ້ອງແທ່ນນັ້ນກໍຈະບໍລິສຸດດ້ວຍ
[38]ຕໍ່ໄປນີ້ເປັນສິ່ງຊຶ່ງເຈົ້າຕ້ອງຖວາຍເທິງແທ່ນນັ້ນທຸກມື້ຕະຫລອດໄປ ຄືລູກແກະສອງໂຕ
ອາຍຸໜຶ່ງປີ. [39]ຈົ່ງນຳລູກແກະໂຕໜຶ່ງມາບູຊາຕອນເຊົ້າ ແລະນຳລູກແກະອີກໂຕໜຶ່ງມາບູຊາ
ຕອນແລງ [40]ພ້ອມກັບລູກແກະໂຕທີ່ໜຶ່ງນັ້ນ ຈົ່ງຖວາຍຍອດແປ້ງໜຶ່ງໃນສິບເອຟານວດກັບນ້ຳ-
ມັນທີ່ຄັ້ນໄວ້ນັ້ນ ໜຶ່ງໃນສີ່ຮິນ ແລະນ້ຳອະງຸ່ນໜຶ່ງໃນສີ່ຮິນ[ກ] ຄູ່ກັນ ເປັນເຄື່ອງດື່ມບູຊາ [41]ຈົ່ງ
ຖວາຍລູກແກະອີກໂຕໜຶ່ງໃນຕອນແລງ ຖວາຍອາຫານບູຊາແລະເຄື່ອງດື່ມບູຊາຄູ່ກັນ ເໝືອນ
ຢ່າງໃນຕອນເຊົ້າ ໃຫ້ເປັນກິ່ນທີ່ພໍພຣະໄທ ເປັນເຄື່ອງບູຊາດ້ວຍໄຟຖວາຍແກ່ພຣະຜູ້ເປັນເຈົ້າ
[42]ນີ້ຈະເປັນເຄື່ອງເຜົາບູຊາຕະຫລອດຊົ່ວອາຍຸຂອງເຈົ້າ ທີ່ປະຕູຫໍເຕັນແຫ່ງຊຸມນຸມຈຳເພາະ
ພຣະພັກພຣະຜູ້ເປັນເຈົ້າທີ່ເຮົາຈະພົບເຈົ້າທັງຫລາຍ ແລະສົນທະນາກັບເຈົ້າບ່ອນນັ້ນ [43]ບ່ອນ
ນັ້ນ ເຮົາຈະພົບກັບຊົນຊາດອິສຣາເອນ ແລະຫໍເຕັນນັ້ນຈະຮັບການຊຳລະໃຫ້ບໍລິສຸດດ້ວຍສະ-
ຫງ່າຣາສີຂອງເຮົາ
[44]ເຮົາຈະຊຳລະຫໍເຕັນແຫ່ງຊຸມນຸມແລະແທ່ນບູຊາໄວ້ເປັນທີ່ບໍລິສຸດ ແລະເຮົາຈະຊຳລະອາ-
ໂຣນແລະລູກຊາຍລາວໃຫ້ບໍລິສຸດດ້ວຍ ເພື່ອລາວຈະບົວລະບັດເຮົາໃນຕຳແໜ່ງປະໂລຫິດ
[45]ເຮົາຈະສະຖິດຢູ່ທ່າມກາງຊົນຊາດອິສຣາເອນ ແລະຈະເປັນພຣະເຈົ້າຂອງເຂົາ [46]ເຂົາຈະຮູ້
ວ່າເຮົາຄືພຣະຜູ້ເປັນເຈົ້າພຣະເຈົ້າຂອງເຂົາ ຜູ້ໄດ້ນຳເຂົາອອກຈາກແຜ່ນດິນເອຢິບເພື່ອເຮົາຈະ
ສະຖິດຢູ່ທ່າມກາງເຂົາທັງຫລາຍ ເຮົາຄືພຣະຜູ້ເປັນເຈົ້າພຣະເຈົ້າຂອງເຂົາ”

## ບົດທີ 30

[1]“ເຈົ້າຈົ່ງສ້າງແທ່ນສຳລັບເຜົາເຄື່ອງຫອມ ຈົ່ງເຮັດແທ່ນນັ້ນດ້ວຍໄມ້ກະຖິນເທດ [2]ໃຫ້ຍາວ
ສອກໜຶ່ງ ກວ້າງສອກໜຶ່ງ ເປັນຮູບສີ່ຫລ່ຽມມົນທົນ ແລະສູງສອງສອກ ຍອດມຸມແທ່ນນັ້ນໃຫ້

---
[ກ]ສາຍພາຍຈ່ອງໂສ້ງ

ເປັນໄມ້ທ່ອນດຽວກັບແທ່ນ [3]ແລະຈົ່ງຫຸ້ມແທ່ນດ້ວຍທອງຄຳບໍລິສຸດ ທັງດ້ານເທິງແລະດ້ານຂ້າງ
ທຸກດ້ານ ແລະຍອດດ້ວຍ ແລະຈົ່ງເຮັດກະຈັງທອງຄຳອ້ອມຮອບແທ່ນ [4]ຈົ່ງເຮັດຫູທອງຄຳສອງ
ຫູ ຕິດໄວ້ກ້ອງກະຈັງເບື້ອງລະຫູຕົງກັນຂ້າມ ຫູນັ້ນສຳລັບສອດໃສ່ໄມ້ຄານຫາມ [5]ໄມ້ຄານຫາມ
ນັ້ນຈົ່ງເຮັດດ້ວຍໄມ້ກະຖິນເທດຫຸ້ມດ້ວຍທອງຄຳ
[6]ຈົ່ງຕັ້ງແທ່ນນັ້ນໄວ້ນອກຜ້າກັ້ງຊຶ່ງຢູ່ໃກ້ຫີບພຣະບັນຍັດ ຕໍ່ໜ້າພຣະທີ່ນັ່ງກະລຸນາຊຶ່ງຢູ່ເໜືອ
ຫີບພຣະບັນຍັດ ບ່ອນທີ່ເຮົາຈະພົບກັບເຈົ້າ [7]ຈົ່ງໃຫ້ອາໂຣນເຜົາເຄື່ອງຫອມເທິງແທ່ນນັ້ນທຸກ
ຕອນເຊົ້າ ເມື່ອລາວແຕ່ງຕະກຽງກໍຈົ່ງເຜົາເຄື່ອງຫອມດ້ວຍ [8]ແລະໃນຕອນແລງເມື່ອອາໂຣນໄຕ້
ຕະກຽງ ໃຫ້ເຜົາເຄື່ອງຫອມເທິງແທ່ນເປັນເຄື່ອງຫອມຕໍ່ພຣະພັກພຣະຜູ້ເປັນເຈົ້າຕະຫລອດຊົ່ວ
ອາຍຸຂອງເຈົ້າ [9]ແຕ່ເຄື່ອງຫອມຢ່າງທີ່ຫ້າມນັ້ນ ຢ່າໄດ້ເຜົາເທິງແທ່ນເລີຍ ຫລືເຜົາເຄື່ອງເຜົາບູ-
ຊາ ຫລືເຄື່ອງອາຫານບູຊາ ຫລືຖອກເຄື່ອງດື່ມບູຊາເທິງແທ່ນນັ້ນ [10]ໃຫ້ອາໂຣນເຮັດການບູຊາ
ໄຖ່ບາບທີ່ຈອມແທ່ນປີລະເທື່ອດ້ວຍເລືອດຂອງເຄື່ອງບູຊາໄຖ່ບາບລຶບລ້າງມົນທິນ ໃຫ້ລາວເຮັດ
ການລຶບລ້າງມົນທິນແທ່ນນັ້ນປີລະເທື່ອ ຕະຫລອດຊົ່ວອາຍຸຂອງເຈົ້າ ແທ່ນນັ້ນຈະບໍລິສຸດທີ່ສຸດ
ແກ່ພຣະຜູ້ເປັນເຈົ້າ”

## ເງິນເຄິ່ງເຊເຂເປັນຄ່າໄຖ່ຊີວິດ

[11]ພຣະຜູ້ເປັນເຈົ້າກ່າວກັບໂມເຊວ່າ [12]“ເມື່ອເຈົ້າຈະຈົດສຳມະໂນຄົວຊົນຊາດອິສຣາເອນຈົ່ງ
ໃຫ້ເຂົາເຈົ້າພາກັນນຳຊັບສິນມາຖວາຍພຣະຜູ້ເປັນເຈົ້າ ເປັນຄ່າໄຖ່ຊີວິດ ເມື່ອເຈົ້ານັບຈຳນວນ
ເຂົາ ເພື່ອຈະບໍ່ໃຫ້ເກີດໄພພິບັດຂຶ້ນໃນໝູ່ພວກເຂົາເມື່ອເຈົ້ານັບເຂົາ [13]ທຸກຄົນທີ່ຂຶ້ນທະບຽນສຳ-
ມະໂນຄົວ ຈະຕ້ອງຖວາຍຂອງຢ່າງນີ້ ຄືເງິນເຄິ່ງເຊເຂຕາມເຊເຂຂອງບໍລິສຸດສະຖານ (ເຊເຂ
ໜຶ່ງມີຊາວເກຣາ) ເຄິ່ງເຊເຂເປັນເງິນຖວາຍແກ່ພຣະຜູ້ເປັນເຈົ້າ [14]ທຸກໆຄົນທີ່ຂຶ້ນທະບຽນສຳ-
ມະໂນຄົວ ອາຍຸຕັ້ງແຕ່ຊາວປີຂຶ້ນໄປ ໃຫ້ນຳເງິນມາຖວາຍພຣະຜູ້ເປັນເຈົ້າ [15]ເມື່ອເຈົ້າທັງ-
ຫລາຍນຳເງິນມາຖວາຍພຣະຜູ້ເປັນເຈົ້າ ເພື່ອຈະໄດ້ໄຖ່ຊີວິດຂອງເຈົ້າທັງຫລາຍນັ້ນສຳລັບຄົນ
ຮັ່ງມີກໍຢ່າຖວາຍເກີນ ແລະສຳລັບຄົນຈົນກໍຢ່າຖວາຍໜ້ອຍກວ່າເຄິ່ງເຊເຂ [16]ຈົ່ງເກັບເງິນຄ່າໄຖ່
ຈາກຊົນຊາດອິສຣາເອນ ແລະຈົ່ງກຳນົດເງິນໄວ້ໃຊ້ຈ່າຍໃນຫໍເຕັນແຫ່ງຊຸມນຸມ ເພື່ອເປັນທີ່ລະ-
ນຶກແກ່ຊົນຊາດອິສຣາເອນຕໍ່ພຣະພັກພຣະຜູ້ເປັນເຈົ້າ ສຳລັບການໄຖ່ຊີວິດຂອງເຈົ້າທັງຫລາຍ”

## ຂັນທອງສຳລິດສຳລັບລ້າງມື ແລະ ຕີນຂອງພວກປະໂລຫິດ

[17]ພຣະຜູ້ເປັນເຈົ້າກ່າວກັບໂມເຊວ່າ [18]“ເຈົ້າຈົ່ງເຮັດຂັນທອງສຳລິດ ແລະພານຮອງຂັນທອງ
ສຳລິດດ້ວຍ ສຳລັບຊຳລະລ້າງ ຈົ່ງຕັ້ງຂັນນັ້ນໄວ້ລະຫວ່າງຫໍເຕັນແຫ່ງຊຸມນຸມ ແລະແທ່ນບູຊາ
ແລ້ວຈົ່ງຕັກນ້ຳໃສ່ໄວ້ໃນຂັນນັ້ນ [19]ໃຫ້ອາໂຣນແລະລູກຊາຍຂອງລາວໃຊ້ລ້າງມືແລະຕີນ [20]ເມື່ອ
ລາວຈະເຂົ້າໄປໃນຫໍເຕັນແຫ່ງຊຸມນຸມ ລາວຈະຕ້ອງຊຳລະດ້ວຍນ້ຳ ເພື່ອຈະບໍ່ຕາຍ ຫລືເມື່ອ
ລາວເຂົ້າມາໃກ້ແທ່ນເຮັດການບົວລະບັດ ເພື່ອຖວາຍເຄື່ອງບູຊາດ້ວຍໄຟແກ່ພຣະຜູ້ເປັນເຈົ້າ
[21]ຈົ່ງໃຫ້ລາວລ້າງມື ແລະຕີນເພື່ອຈະບໍ່ໄດ້ຕາຍ ແລະໃຫ້ເປັນກົດເກນປະຈຳຕົວລາວ ຄືອາໂຣນ
ກັບເຊື້ອສາຍຂອງລາວຕະຫລອດຊົ່ວອາຍຸຂອງເຂົາ”

## ນ້ຳມັນເຈີມອັນບໍລິສຸດ

[22]ຍິ່ງກວ່ານັ້ນ ພຣະຜູ້ເປັນເຈົ້າຍັງກ່າວກັບໂມເຊວ່າ [23]“ຈົ່ງເອົາເຄື່ອງເທດພິເສດຄືຢາງໄມ້
ຫອມ ຊຶ່ງໜັກຫ້າຮ້ອຍເຊເຂ ແລະກຳຍານຫອມເຄິ່ງຈຳນວນຄືສອງຮ້ອຍຫ້າສິບເຊເຂ ແລະຫົວ
ສີໄຄສອງຮ້ອຍຫ້າສິບເຊເຂ [24]ແລະກາລະບູນຫ້າຮ້ອຍເຊເຂຕາມເຊເຂ ຂອງບໍລິສຸດສະຖານ
ແລະນ້ຳມັນໝາກກອກເທດໜຶ່ງຮິນ [25]ເຈົ້າຈົ່ງເອົາສິ່ງເຫລົ່ານີ້ມາເຮັດເປັນນ້ຳມັນເຈີມອັນບໍລິສຸດ
ເປັນນ້ຳຫອມປຸງຕາມສິລະປະຊ່າງປຸງນ້ຳມັນ ຊຶ່ງຈະເປັນນ້ຳມັນເຈີມອັນບໍລິສຸດ
[26]ແລ້ວຈົ່ງເອົານ້ຳມັນເຈີມຫໍເຕັນແຫ່ງຊຸມນຸມ ແລະຫີບພຣະບັນຍັດ [27]ໂຕະ ແລະເຄື່ອງໃຊ້
ປະຈຳໂຕະ ຄັນຕະກຽງກັບເຄື່ອງໃຊ້ປະຈຳຄັນຕະກຽງ ແລະແທ່ນເຜົາເຄື່ອງຫອມ [28]ແທ່ນເຜົາ
ເຄື່ອງບູຊາ ແລະເຄື່ອງໃຊ້ປະຈຳແທ່ນ ທັງຂັນແລະພານຮອງຂັນນັ້ນ [29]ຈົ່ງຊຳລະໃຫ້ບໍລິສຸດ
ເພື່ອຈະໄດ້ບໍລິສຸດທີ່ສຸດ ແລະອັນ ໃດກໍຕາມທີ່ມາຖືກ ສິ່ງເຫລົ່ານັ້ນກໍຈະບໍລິສຸດດ້ວຍ
[30]ອີກອັນໜຶ່ງ ຈົ່ງເຈີມອາໂຣນ ແລະລູກຊາຍລາວແລະສະຖາປະນາເຂົາເຈົ້າໄວ້ໃຫ້ບົວລະບັດ
ເຮົາໃນຕຳແໜ່ງປະໂລຫິດ [31]ເຈົ້າຈົ່ງກ່າວແກ່ຊົນຊາດອິສຣາເອນວ່າ ‘ນີ້ແຫລະ ເປັນນ້ຳມັນ
ເຈີມອັນບໍລິສຸດສຳລັບເຮົາຕະຫລອດຊົ່ວອາຍຸຂອງເຈົ້າ [32]ນ້ຳມັນນີ້ຢ່າໃຫ້ເຈີມຄົນສາມັນ ແລະຢ່າ
ປະສົມເຮັດນ້ຳມັນອື່ນເໝືອນຢ່າງນ້ຳມັນນີ້ ນ້ຳມັນນີ້ເປັນນ້ຳມັນບໍລິສຸດ ເຈົ້າທັງຫລາຍຈົ່ງຖືໄວ້
ເປັນບໍລິສຸດ [33]ຜູ້ໃດຈະປະສົມນ້ຳມັນຢ່າງນີ້ ຫລືຜູ້ໃດຈະໃຊ້ທົດສິງຄົນນອກ ຜູ້ນັ້ນຈະຖືກຕັດ
ຈາກຊົນຊາດຂອງລາວ’”

## ເຄື່ອງຫອມສຳລັບແທ່ນເຜົາເຄື່ອງຫອມ

[34]ພຣະຜູ້ເປັນເຈົ້າກ່າວກັບໂມເຊວ່າ “ຈົ່ງເອົາເຄື່ອງເທດຄືຢາງໄມ້ ຊາມົດ ແລະມະຫາຫິງ
ປະສົມກັບກຳຍານບໍລິສຸດ ໃຫ້ເທົ່າໆກັນທຸກຢ່າງ [35]ຈົ່ງປະສົມເຄື່ອງຫອມປຸງຕາມສິລະປະຊ່າງ
ປຸງເຈືອດ້ວຍເກືອໃຫ້ເປັນຂອງບໍລິສຸດ ແລະສັກສິດ [36]ຈົ່ງເອົາສ່ວນໜຶ່ງມາຕຳໃຫ້ລະອຽດ ແລະ
ວາງອີກສ່ວນໜຶ່ງໄວ້ໜ້າຫີບພຣະບັນຍັດໃນຫໍເຕັນແຫ່ງຊຸມນຸມທີ່ເຮົາຈະພົບກັບເຈົ້າ ເຄື່ອງຫອມ
ນັ້ນເຈົ້າຈົ່ງຖືວ່າບໍລິສຸດທີ່ສຸດ [37]ເຄື່ອງຫອມທີ່ເຈົ້າເຮັດຕາມສ່ວນທີ່ປະສົມນັ້ນ ເຈົ້າຢ່າເຮັດໃຊ້ເອງ
ໃຫ້ຖືວ່ານີ້ເປັນເຄື່ອງຫອມບໍລິສຸດແກ່ພຣະຜູ້ເປັນເຈົ້າ [38]ຜູ້ໃດເຮັດເຄື່ອງຫອມເຊັ່ນນີ້ໄວ້ໃຊ້ເປັນ
ນ້ຳຫອມ ຜູ້ນັ້ນຕ້ອງຖືກຕັດຈາກຊົນຊາດຂອງຕົນ”

# ບົດທີ 31

[1]ພຣະຜູ້ເປັນເຈົ້າກ່າວກັບໂມເຊວ່າ [2]“ເບິ່ງ ເຮົາໄດ້ອອກຊື່ເບຊາເລນ ຜູ້ເປັນລູກຊາຍອູຣີ ຜູ້
ເປັນລູກຊາຍຮູເຣແຫ່ງຕະກຸນຢູດາ [3]ແລະໄດ້ໃຫ້ເຂົາປະກອບດ້ວຍພຣະວິນຍານຂອງພຣະເຈົ້າ
ຄືໃຫ້ເຂົາມີສະຕິປັນຍາ ຄວາມເຂົ້າໃຈ ແລະຄວາມຮູ້ໃນວິຊາການທຸກຢ່າງ [4]ຈະໄດ້ຄິດອອກ
ແບບຢ່າງປະນີດໃນການເຮັດເຄື່ອງທອງຄຳ ເງິນ ແລະທອງສຳລິດ [5]ເຈຍລະໄນພອຍຕ່າງໆ
ສຳລັບຝັງໃນກະໂບກແລະແກະສະຫລັກໄມ້ໄດ້ ຄືປະກອບວິຊາການທຸກຢ່າງ [6]ແລະເບິ່ງແມ
ເຮົາໄດ້ຕັ້ງຜູ້ຊ່ວຍອີກຄົນໜຶ່ງ ຊື່ໂອໂຮລຽບ ລູກຊາຍອາຮີສາມັກແຫ່ງຕະກຸນດານ ແລະສຳລັບ
ຄົນທັງປວງຜູ້ສະຫລຽວສະຫລາດ ເຮົາໄດ້ບັນດານໃຫ້ເຂົາມີຈິດໃຈອັນປະກອບດ້ວຍສະຕິປັນຍາ

ເພື່ອເຂົາຈະໄດ້ເຮັດສິ່ງສາລະພັດຊຶ່ງເຮົາໄດ້ສັ່ງເຈົ້າໄວ້ນັ້ນ 7ຄືຫໍເຕັນແຫ່ງຊຸມນຸມ ຫີບພຣະບັນ-
ຍັດ ແລະພຣະທີ່ນັ່ງກະລຸນາ ຊຶ່ງຢູ່ເທິງຫີບພຣະບັນຍັດ ແລະເຄື່ອງໃຊ້ທຸກຢ່າງສຳລັບຫໍເຕັນ
8ໂຕະກັບເຄື່ອງໃຊ້ສຳລັບໂຕະ ຄັນຕະກຽງບໍລິສຸດກັບເຄື່ອງໃຊ້ສຳລັບຄັນຕະກຽງ ແລະແທ່ນ
ເຄື່ອງຫອມ 9ແທ່ນເຜົາເຄື່ອງບູຊາກັບເຄື່ອງໃຊ້ປະຈຳແທ່ນ ຂັນກັບພານຮອງຂັນນັ້ນ 10ເສື້ອຍົດ
ຫຍິບດ້ວຍຝີມືປະນີດ ຄືເສື້ອຍົດອັນບໍລິສຸດຂອງອາໂຣນປະໂລຫິດ ແລະເສື້ອຍົດຂອງລູກຊາຍ
ຂອງລາວ ເພື່ອຈະໄດ້ສວມໃສ່ປະຕິບັດໃນຕຳແໜ່ງປະໂລຫິດ 11ແລະນ້ຳມັນເຈີມກັບເຄື່ອງຫອມ
ສຳລັບທີ່ບໍລິສຸດ ຊຶ່ງເຮົາບັນຊາເຈົ້າ ໃຫ້ເຂົາເຮັດຕາມທຸກປະການ”

## ວັນສະບາໂຕເປັນໝາຍສຳຄັນ ລະຫວ່າງພຣະເຈົ້າກັບອິສຣາເອນ

12ພຣະຜູ້ເປັນເຈົ້າກ່າວກັບໂມເຊວ່າ 13“ຈົ່ງສັ່ງຊົນຊາດອິສຣາເອນວ່າ ‘ເຈົ້າທັງຫລາຍຈົ່ງ
ຮັກສາວັນສະບາໂຕຂອງເຮົາໄວ້ ເພາະນີ້ຈະເປັນໝາຍສຳຄັນລະຫວ່າງເຮົາກັບເຈົ້າຕະຫລອດ
ຊົ່ວອາຍຸຂອງເຈົ້າ ເພື່ອເຈົ້າຈະໄດ້ຮູ້ວ່າເຮົາຄືພຣະຜູ້ເປັນເຈົ້າ ຜູ້ໄດ້ເຮັດໃຫ້ເຈົ້າບໍລິສຸດ 14ດັ່ງ-
ນັ້ນ ເຈົ້າທັງຫລາຍຈົ່ງນັບຖືວັນສິນນີ້ໄວ້ ເພາະວ່າເປັນວັນສັກສິດ ພວກເຈົ້າຜູ້ໃດບໍ່ຖືຮັກສາວັນ
ສັກສິດນີ້ ຈະຕ້ອງຖືກໂທດເຖິງຕາຍ ແລະຜູ້ໃດເຮັດວຽກໃນວັນສິນນີ້ ຜູ້ນັ້ນຈະຕ້ອງຖືກກຳຈັດ
ອອກຈາກຊົນຊາດຂອງຕົນ. 15ໃຫ້ພວກເຈົ້າເຮັດວຽກແຕ່ໃນກຳນົດຫົກມື້ ແຕ່ມື້ຖ້ວນເຈັດໃຫ້ຖື
ເປັນມື້ພັກ ແລະເປັນມື້ສັກສິດຂອງພຣະຜູ້ເປັນເຈົ້າ. 16ຜູ້ໃດເຮັດວຽກໃນມື້ນີ້ຈະຕ້ອງຖືກໂທດ
ເຖິງຕາຍປະຊາຊົນອິສຣາເອນຈະຕ້ອງນັບຖືວັນສິນນີ້ສືບໄປທຸກຊົ່ວຄົນ ໃຫ້ຖືເປັນຄຳໝັ້ນສັນຍາ
ຕະຫລອດໄປ. 17ວັນນີ້ເປັນໝາຍສຳຄັນລະຫວ່າງເຮົາກັບປະຊາຊົນອິສຣາເອນຕະຫລອດໄປ
ເພາະວ່າເຮົາໄດ້ສ້າງສະຫວັນຊັ້ນຟ້າ ແລະແຜ່ນດິນໃນຫົກມື້ນັ້ນ ແຕ່ມື້ຖ້ວນເຈັດເຮົາໄດ້ຢຸດທຳ
ງານ ແລະໄດ້ພັກຜ່ອນ.

18ເມື່ອພຣະຜູ້ເປັນເຈົ້າຊົງກ່າວກັບໂມເຊຢູ່ເທິງພູຊີນາຍສຸດແລ້ວ ພຣະອົງໄດ້ຊົງປະທານ
ແຜ່ນຫີນພຣະບັນຍັດສອງແຜ່ນແກ່ໂມເຊ ແຜ່ນຫີນນັ້ນແມ່ນນີ້ວພຣະຫັດຂອງພຣະເຈົ້າໄດ້ຊົງ
ຈາລຶກໄວ້.

# ບົດທີ 32

1ເມື່ອປະຊາຊົນເຫັນໂມເຊພັກຢູ່ເທິງພູ ເທິງນານບໍ່ລົງມາຈັກເທື່ອ ພວກເຂົາກໍພາກັນມາຫຸ້ມ
ລ້ອມອາໂຣນເວົ້າວ່າ, “ຈົ່ງສ້າງຮູບພະສຳລັບນຳໜ້າພວກເຮົາໄປເທາະ ດ້ວຍວ່າ ໂມເຊຄົນທີ່
ນຳພວກເຮົາອອກຈາກປະເທດເອຢິບນັ້ນ ພວກເຮົາບໍ່ຮູ້ວ່າເພິ່ນເປັນຫຍັງໄປເສຍແລ້ວ.

2ອາໂຣນໄດ້ຕອບພວກເຂົາວ່າ, “ຈົ່ງຖອດຕຸ້ມຫູຄຳອອກຈາກຫູເມຍ ແລະລູກຊາຍລູກສາວ
ຂອງພວກເຈົ້າແລ້ວໃຫ້ເອົາມັນມາໃຫ້ເຮົາ.” 3ສະນັ້ນ ປະຊາຊົນທັງໝົດຈຶ່ງຖອດຕຸ້ມຫູຄຳຂອງ
ຕົນມາມອບໃຫ້ອາໂຣນ. 4ອາໂຣນກໍຮັບເອົາຕຸ້ມຫູນັ້ນ ແລ້ວໃຊ້ເຄື່ອງມືຫລໍ່ເປັນຮູບງົວນ້ອຍ
ປະຊາຊົນໄດ້ເວົ້າວ່າ, “ອິສຣາເອນເອີຍ ອັນນີ້ແມ່ນພະຂອງພວກເຮົາ ຊຶ່ງໄດ້ນຳພວກເຮົາອອກ
ຈາກເອຢິບ.”

5ເມື່ອອາໂຣນເຫັນເຊັ່ນນັ້ນ ລາວກໍ່ສ້າງແທ່ນອັນໜຶ່ງໄວ້ຕໍ່ໜ້າຮູບງົວຄຳ ແລ້ວປະກາດວ່າ,

“ມື້ອື່ນ ຈະ ມີງານ ກິນລ້ຽງ ຖວາຍ ພຣະກຽດ ແດ່ ພຣະຜູ້ເປັນເຈົ້າ.” [6]ຄັນ ຮອດ ມື້ອື່ນ ຕອນ ເຊົ້າມືດ
ພວກເຂົາກໍເຜົາສັດຖວາຍ ແລະນຳເອົາສັດໂຕອື່ນມາຖວາຍເພື່ອຄວາມສາມັກຄີ ຝ່າຍປະຊາຊົນ
ກໍນັ່ງລົງກິນແລະດື່ມ ແລ້ວກໍຫລິ້ນມ່ວນຊື່ນກັນ.

[7]ພຣະຜູ້ເປັນເຈົ້າ ຊົງບອກ ໂມເຊ ວ່າ, “ຈົ່ງລົງໄປດຽວນີ້ ດ້ວຍວ່າປະຊາຊົນຂອງເຈົ້າ ຊຶ່ງເຈົ້າ
ໄດ້ພາອອກມາຈາກປະເທດ ເອຢິບ ນັ້ນໄດ້ເຮັດຜິດເສຍແລ້ວ. [8]ພວກເຂົາໄດ້ປະຖິ້ມທາງປະພຶດທີ່
ເຮົາສັ່ງໃຫ້ເຮັດ ຄືເຂົາໄດ້ຫລໍ່ຮູບງົວນ້ອຍດ້ວຍຄຳຮູບໜຶ່ງສຳລັບຂາບໄຫວ້ ແລະ ຖວາຍບູຊາ
ພວກເຂົາເວົ້າວ່າ ອິສຣາເອນ ເອີຍ ອັນນີ້ແມ່ນພະຂອງພວກເຮົາ ຊຶ່ງໄດ້ນຳພາພວກເຮົາອອກ
ຈາກ ເອຢິບ.”

[9]ພຣະຜູ້ເປັນເຈົ້າ ຊົງບອກ ໂມເຊ ອີກວ່າ, “ເຮົາຮູ້ຈັກປະຊາຊົນພວກນີ້ດີ ພວກເຂົາເປັນຄົນ
ຫົວດື້. [10]ບັດນີ້ ປ່ອຍໃຫ້ເປັນໜ້າທີ່ຂອງເຮົາ ເຮົາຈະທຳລາຍພວກ ເຂົາດ້ວຍຄວາມໂກດຮ້າຍ
ຂອງເຮົາ ແລ້ວເຮົາຈະເຮັດໃຫ້ເຈົ້າ ແລະເຊື້ອສາຍຂອງເຈົ້າເປັນປະຊາຊົນໃຫຍ່.”

[11]ແຕ່ ໂມເຊ ໄດ້ອ້ອນວອນ ພຣະຜູ້ເປັນເຈົ້າ ຂອງຕົນວ່າ, “ຂ້າແດ່ ພຣະຜູ້ເປັນເຈົ້າ ດ້ວຍເຫດ
ໃດພຣະອົງຈຶ່ງປ່ອຍໃຫ້ພຣະພິໂລດຂອງພຣະອົງລຸກໄໝ້ໄພ່ພົນຂອງພຣະອົງ ຊຶ່ງແມ່ນພຣະອົງ
ໄດ້ຊົງນຳເຂົາອອກມາຈາກປະເທດ ເອຢິບ ດ້ວຍຄວາມຍິ່ງໃຫຍ່ ແລະອຳນາດ. [12]ພຣະອົງຢາກ
ຈະໃຫ້ຊາວ ເອຢິບ ເວົ້າຫລືວ່າ ພຣະອົງໄດ້ຊົງນຳພວກເຂົາອອກມາຈາກ ເອຢິບ ດ້ວຍເຈດຕະນາ
ຮ້າຍ ຄືເພື່ອປະຫານຊີວິດ ແລະທຳລາຍພວກເຂົາໃຫ້ຕາຍໝົດຢູ່ເທິງພູ ຂໍພຣະອົງຊົງ ໂຜດຢຸດ
ຄວາມໂກດຮ້າຍອັນແຮງກ້າຂອງພຣະອົງເສຍຖ້ອນ ແລະຊົງປ່ຽນພຣະໄທ ຢ່ານຳໄພວິບັດຢ່າງ
ນີ້ມາສູ່ໄພ່ພົນຂອງພຣະອົງເລີຍ. [13]ຂໍພຣະອົງຊົງລະນຶກເຖິງ ອັບຣາຮາມ ອີຊາກ ແລະ ອິສຣາ-
ເອນ ຜູ້ຮັບໃຊ້ຂອງພຣະອົງ ຜູ້ຊຶ່ງພຣະອົງໄດ້ປະຕິຍານໄວ້ກັບເຂົາດ້ວຍພຣະນາມຂອງພຣະອົງ
ເອງວ່າ ເຮົາຈະໃຫ້ເຊື້ອສາຍຂອງເຈົ້າເພີ່ມທະວີຫລາຍຂຶ້ນເໝືອນດາວໃນທ້ອງຟ້າ ແລະຈະໃຫ້
ແຜ່ນດິນທັງໝົດນີ້ແກ່ເຊື້ອສາຍຂອງເຈົ້າຕາມທີ່ເຮົາໄດ້ສັນຍາໄວ້ ພວກເຂົາຈະໄດ້ເປັນເຈົ້າຂອງ
ຕະຫລອດໄປເປັນນິດ.” [14]ສະນັ້ນ ພຣະຜູ້ເປັນເຈົ້າ ຈຶ່ງຊົງປ່ຽນພຣະໄທ ບໍ່ຊົງນຳໄພວິບັດມາສູ່
ໄພ່ພົນຂອງພຣະອົງຕາມທີ່ຊົງກ່າວນັ້ນ.

[15]ຝ່າຍ ໂມເຊ ໄດ້ກັບລົງມາຈາກພູ ຖືແຜ່ນຫີນພຣະບັນຍັດມາສອງແຜ່ນ. [16]ໃນແຜ່ນຫີນນັ້ນ
ໄດ້ຈາລຶກພຣະຄຳຂອງ ພຣະເຈົ້າ ໄວ້ທັງສອງຂ້າງ ເປັນພຣະຫັດຂອງ ພຣະເຈົ້າ ພຣະເຈົ້າ ຊົງ
ຈາລຶກໃສ່ແຜ່ນຫີນນັ້ນ. [17]ເມື່ອ ໂຢຊວຍ ໄດ້ຍິນສຽງປະຊາຊົນອຶກກະທຶກຢູ່ ລາວກໍເວົ້າກັບ ໂມເຊ
ວ່າ, “ຂ້ານ້ອຍໄດ້ຍິນສຽງສູ້ຮົບກັນຢູ່ໃນຄ້າຍ.” [18]ໂມເຊ ໄດ້ຕອບວ່າ, “ນັ້ນບໍ່ແມ່ສຽງຂອງຄົນທີ່
ມີໄຊຊະນະ ແລະບໍ່ແມ່ນສຽງຮ້ອງໄຫ້ຂອງຄົນທີ່ຍອມແພ້ ສຽງທີ່ໄດ້ຍິນນັ້ນແມ່ນສຽງຮ້ອງເພງ.”

[19]ເມື່ອ ໂມເຊ ເຂົ້າມາໃກ້ຄ້າຍ ກໍເຫັນຮູບງົວນ້ອຍແລະເຫັນປະຊາຊົນກຳລັງເຕັ້ນລຳກັນຢູ່ ເພິ່ນ
ຈຶ່ງຮ້າຍຢ່າງຮຸນແຮງ ໂດຍໄດ້ໂຍນແຜ່ນຫີນທີ່ຖືມານັ້ນຖິ້ມຈົນແຕກເສຍຫາຍຢູ່ທີ່ຕີນພູ. [20]ເພິ່ນ
ໄດ້ເຜົາຮູບງົວນ້ອຍທີ່ພວກເຂົາເຮັດນັ້ນຖິ້ມ ໄດ້ບົດລະອຽດໂຮຍລົງໃນນ້ຳ ແລ້ວໄດ້ບັງຄັບໃຫ້
ຊາວ ອິສຣາເອນ ດື່ມ.

[21]ໂມເຊ ໄດ້ຖາມ ອາໂຣນ ວ່າ, “ປະຊາຊົນພວກນີ້ໄດ້ເຮັດຫຍັງໃຫ້ເຈົ້າ ເຈົ້າຈຶ່ງພາພວກເຂົາ

ເຮັດບາບຢ່າງໃຫຍ່ຫລວງນີ້?” [22]ອາໂຣນໄດ້ຕອບວ່າ, “ຢ່າຄຽດຮ້າຍຂ້ານ້ອຍເທາະ ທ່ານກໍຮູ້
ວ່າປະຊາຊົນເຫລົ່ານີ້ໄດ້ອວ່າຍໜ້າໄປສູ່ທາງຊົ່ວແລ້ວ. [23]ເຂົາໄດ້ມາຮ້ອງຂໍຕໍ່ຂ້ານ້ອຍວ່າໃຫ້ສ້າງ
ຮູບພະສຳລັບນຳໜ້າພວກເຂົາໄປ ເພາະພວກເຂົາບໍ່ຮູ້ຈັກວ່າໂມເຊຄົນທີ່ນຳພາພວກເຂົາອອກ
ຈາກປະເທດເອຢິບນັ້ນເປັນຫຍັງໄປເສຍແລ້ວ. [24]ຂ້ານ້ອຍຈຶ່ງຖາມເຂົາວ່າຜູ້ໃດມີຄຳແດ່ ຜູ້ທີ່ມີ
ເຄື່ອງຄຳຈົ່ງຖອດອອກມາມອບໃຫ້ຂ້ານ້ອຍ ຂ້ານ້ອຍຈຶ່ງເອົາໄປໃສ່ໄຟຫລໍ່ເປັນຮູບງົວນ້ອຍນີ້
ອອກມາ.”

[25]ໂມເຊເຫັນວ່າປະຊາຊົນນີ້ຫລົງງົມງວາຍແລ້ວ ເພາະອາໂຣນໄດ້ປ່ອຍໃຫ້ພວກເຂົາຂາບ
ໄຫວ້ຮູບພະທັງໆທີ່ສັດຕູມີຢູ່ຮອບຕົວເຂົາ. [26]ດັ່ງນັ້ນ ໂມເຊຈຶ່ງໄປຢືນຢູ່ທີ່ປະຕູຄ້າຍ ແລະຮ້ອງ
ຂຶ້ນວ່າ, “ຜູ້ໃດຢູ່ຝ່າຍພຣະຜູ້ເປັນເຈົ້າໃຫ້ຜູ້ນັ້ນມາຫາເຮົາເດີ້.” ພວກເລວີທັງໝົດໄດ້ມາຫາໂມເຊ
[27]ເພິ່ນເວົ້າກັບເຂົາວ່າ ພຣະຜູ້ເປັນເຈົ້າຂອງພວກອິສຣາເອນຊົງກ່າວວ່າ ໃຫ້ພວກເຂົາທຸກຄົນຖື
ດາບ ບຸກຄ້າຍເຂົ້າໄປແຕ່ປະຕູນີ້ເຖິງປະຕູນັ້ນ ແລ້ວໃຫ້ຂ້າອ້າຍນ້ອງມິດສະຫາຍ ແລະເພື່ອນ
ບ້ານຂອງພວກເຈົ້າ.”

[28]ພວກເລວີຈຶ່ງເຮັດຕາມໂມເຊສັ່ງ ພວກເຂົາໄດ້ຂ້າປະຊາຊົນຕາຍໃນມື້ນັ້ນປະມານສາມພັນ
ຄົນ. [29]ແລ້ວໂມເຊໄດ້ເວົ້າຕໍ່ພວກເລວີວ່າ, “ມື້ນີ້ພວກເຈົ້າໄດ້ສະຖາປະນາຕົວເອງຂຶ້ນເປັນປະ-
ໂລຫິດຮັບໃຊ້ພຣະຜູ້ເປັນເຈົ້າແລ້ວ ໂດຍໄດ້ຂ້າລູກຊາຍ ແລະເອື້ອຍນ້ອງຂອງຕົນ ດັ່ງນັ້ນ
ພຣະຜູ້ເປັນເຈົ້າຈຶ່ງຊົງອວຍພຣະພອນໃຫ້ພວກເຈົ້າໃນມື້ນີ້.”

[30]ມື້ຕໍ່ມາໂມເຊໄດ້ເວົ້າກັບປະຊາຊົນວ່າ, “ພວກເຈົ້າໄດ້ເຮັດບາບຢ່າງຮ້າຍແຮງ ບັດນີ້ ເຮົາ
ຈະຂຶ້ນໄປເຝົ້າພຣະຜູ້ເປັນເຈົ້າຢູ່ເທິງພູ ບາງທີເຮົາອາດຈະສາມາດໄຖ່ບາບໃຫ້ພວກເຈົ້າໄດ້.”

[31]ດັ່ງນັ້ນໂມເຊຈຶ່ງກັບຄືນໄປເຝົ້າພຣະຜູ້ເປັນເຈົ້າຂາບທູນວ່າ, “ຂ້າແດ່ພຣະຜູ້ເປັນເຈົ້າ ປະ-
ຊາຊົນນີ້ໄດ້ເຮັດບາບຢ່າງຮ້າຍແຮງ. [32]ພວກເຂົາໄດ້ຫລໍ່ພະຄຳສຳລັບຕົນເອງ ແຕ່ບັດນີ້ ຂໍພຣະ-
ອົງຊົງໂຜດໃຫ້ອະໄພບາບແກ່ເຂົາ ຖ້າພຣະອົງບໍ່ຊົງອະໄພໂທດ ຂໍພຣະອົງຊົງລຶບຊື່ຂອງຂ້າ-
ນ້ອຍອອກຈາກປຶ້ມທີ່ພຣະອົງຊົງຈົດໄວ້ເສຍ.” [33]ພຣະຜູ້ເປັນເຈົ້າຊົງຕອບໂມເຊວ່າ, “ຜູ້ໃດເຮັດ
ບາບຕໍ່ສູ້ເຮົາ ເຮົາຈະລຶບຊື່ຜູ້ນັ້ນອອກຈາກປຶ້ມຂອງເຮົາ. [34]ບັດນີ້ຈົ່ງໄປເສຍ ໃຫ້ພາປະຊາຊົນໄປ
ຍັງທີ່ເຮົາບອກໃຫ້ໄປນັ້ນ ຈົ່ງຈື່ໄວ້ວ່າເທວະດາຂອງເຮົາຈະນຳໜ້າເຈົ້າໄປແຕ່ໃນມື້ນັ້ນ ເມື່ອເຮົາ
ຈະພິພາກສາເຂົາ ເຮົາຈະລົງໂທດພວກເຂົາເອງ.”

[35]ພຣະຜູ້ເປັນເຈົ້າໄດ້ຊົງໃຫ້ພະຍາດເກີດຂຶ້ນໃນໝູ່ປະຊາຊົນ ເພາະວ່າພວກເຂົາໄດ້ບັງຄັບໃຫ້
ອາໂຣນຫລໍ່ຮູບງົວນ້ອຍ.

# ບົດທີ 33

## ພຣະຜູ້ເປັນເຈົ້າສັ່ງໃຫ້ຍົກຍ້າຍໄປ

[1]ພຣະຜູ້ເປັນເຈົ້າຊົງບອກໂມເຊວ່າ, “ເຈົ້າກັບປະຊາຊົນທີ່ເຈົ້າໄດ້ນຳອອກມາຈາກປະເທດ
ເອຢິບ ຈົ່ງຍົກຍ້າຍໄປຈາກບ່ອນນີ້ເສຍ ໃຫ້ໄປຍັງແຜ່ນດິນທີ່ເຮົາໄດ້ສັນຍາໄວ້ກັບອັບຣາຮາມ
ກັບອີຊາກ ແລະຢາໂຄບ ຄືເຮົາໄດ້ສັນຍາຕໍ່ເຂົາວ່າຈະຍົກແຜ່ນດິນນັ້ນໃຫ້ແກ່ເຊື້ອສາຍຂອງເຂົາ

[2]ເຮົາຈະໃຫ້ເທວະດາຕົນໜຶ່ງນຳໜ້າເຈົ້າໄປ ເຮົາຈະຂັບໄລ່ຊາວການາອານ ຊາວອະໂມຣິດ
ຊາວຮິດຕີ ຊາວເປຣິຊີ ຊາວຮີວີ ແລະຊາວເຢບຸດ ອອກຈາກທີ່ນັ້ນ. [3]ເຈົ້າຈະໄປເຖິງແຜ່ນດິນ
ທີ່ອຸດົມສົມບູນ ແຕ່ເຮົາເອງຈະບໍ່ໄປກັບພວກເຈົ້າ ເພາະພວກເຈົ້າເປັນປະຊາຊົນຫົວດື້ ຖ້າເຮົາ
ໄປ ເຮົາອາດຈະທຳຮ້າຍພວກເຈົ້າເສຍຢູ່ກາງທາງ.”

[4]ເມື່ອປະຊາຊົນໄດ້ຍິນຂ່າວຮ້າຍນີ້ ພວກເຂົາກໍພາກັນໄວ້ທຸກ ແລະບໍ່ມີໃຜໃສ່ເຄື່ອງເອ້ເລີຍ.
[5]ພຣະຜູ້ເປັນເຈົ້າຊົງບອກໂມເຊວ່າ, “ຈົ່ງບອກຊາວອິສຣາເອນວ່າພວກເຈົ້າເປັນຄົນຫົວດື້ ຖ້າ
ພຣະຜູ້ເປັນເຈົ້າໄປກັບພວກເຈົ້າແມ່ນຊົ່ວເວລາໜ້ອຍດຽວ ພຣະອົງກໍຈະລ້າງຜານພວກເຈົ້າເສຍ
ບັດນີ້ ຈົ່ງຖອດເຄື່ອງເອ້ຂອງພວກເຈົ້າອອກ ເພື່ອພຣະອົງຈະໄດ້ຮູ້ວ່າຄວນເຮັດຫຍັງກັບພວກ
ເຈົ້າ”. [6]ດັ່ງນັ້ນ ປະຊາຊົນອິສຣາເອນຈຶ່ງບໍ່ໃສ່ເຄື່ອງເອ້ຕັ້ງແຕ່ຍົກຍ້າຍອອກຈາກໂຮເຣັບເປັນ-
ຕົ້ນໄປ.

## ຫໍເຕັນສັກສິດ

[7]ໂມເຊໄດ້ກາງເຕັນຫລັງໜຶ່ງໄວ້ຢູ່ນອກຄ້າຍໃນລະຍະໄກ ເພິ່ນໄດ້ເອີ້ນເຕັນຫລັງນັ້ນວ່າ, “ຫໍ-
ເຕັນສັກສິດ” ຄົນໃດຢາກຈະເຂົ້າເຝົ້າພຣະຜູ້ເປັນເຈົ້າ ກໍອອກໄປຍັງຫໍເຕັນສັກສິດນັ້ນ.

[8]ເມື່ອໃດໂມເຊອອກໄປຍັງເຕັນ ປະຊາຊົນທັງໝົດກໍຢືນຢູ່ທີ່ປະຕູເຕັນຂອງຕົນ ເພື່ອເຝົ້າເບິ່ງ
ໂມເຊຈົນເພິ່ນເຂົ້າໄປໃນເຕັນແລ້ວ. [9]ກ້ອນເສົາເມກກໍລອຍລົງມາຕັ້ງຢູ່ທີ່ປະຕູເຕັນ ແລ້ວພຣະ-
ຜູ້ເປັນເຈົ້າໄດ້ຊົງສົນທະນາກັບໂມເຊຈາກກ້ອນເສົາເມກນັ້ນ. [10]ເມື່ອປະຊາຊົນເຫັນກ້ອນເສົາ
ເມກນັ້ນຕັ້ງຢູ່ທີ່ປະຕູເຕັນ ພວກເຂົາກໍລຸກຢືນຂຶ້ນກົ້ມນະມັດສະການທີ່ປະຕູເຕັນຂອງຕົນ.
[11]ພຣະຜູ້ເປັນເຈົ້າຊົງສົນທະນາກັບໂມເຊໜ້າຕໍ່ໜ້າເໝືອນມິດສະຫາຍສົນທະນາກັນ ແລ້ວໂມ-
ເຊກໍກັບໄປຍັງຄ້າຍ ແຕ່ໂຢຊວຍຄົນໃຊ້ໜຸ່ມ ຜູ້ເປັນລູກຊາຍຂອງນູນບໍ່ໄດ້ອອກໄປຈາກເຕັນ.

## ພຣະຜູ້ເປັນເຈົ້າຊົງສັນຍາວ່າຈະຢູ່ນຳ

[12]ໂມເຊໄດ້ຂາບທູນພຣະຜູ້ເປັນເຈົ້າວ່າ, “ເປັນຄວາມຈິງວ່າພຣະອົງໄດ້ຊົງບອກໃຫ້ຂ້ານ້ອຍ
ນຳພາປະຊາຊົນນີ້ໄປຍັງແຜ່ນດິນນັ້ນ ແຕ່ພຣະອົງບໍ່ໄດ້ຊົງບອກໃຫ້ຂ້ານ້ອຍຮູ້ວ່າ ແມ່ນຜູ້ໃດຈະ
ໄປນຳຂ້ານ້ອຍ ພຣະອົງຊົງບອກແຕ່ພຽງວ່າ ເຮົາຮູ້ຈັກເຈົ້າດີ ເຮົາພໍໃຈໃນເຈົ້າ. [13]ບັດນີ້ ຖ້າ
ພຣະອົງຊົງພໍພຣະໄທໃນຂ້ານ້ອຍ ຂໍພຣະອົງຊົງບອກແຜນການຂອງພຣະອົງໃຫ້ຂ້ານ້ອຍຮູ້ແດ່
ເພື່ອຂ້ານ້ອຍຈະໄດ້ຮູ້ຈັກພຣະອົງ ແລະໄດ້ຮັບພຣະກະລຸນາຈາກພຣະອົງສະເໝີໄປ ຂໍພຣະອົງ
ຊົງລະນຶກດ້ວຍວ່າ ຊົນຊາດນີ້ເປັນໄພ່ພົນຂອງພຣະອົງ.”

[14]ພຣະຜູ້ເປັນເຈົ້າຊົງຕອບວ່າ, “ເຮົາຈະໄປນຳເຈົ້າ ຈະໃຫ້ເຈົ້າມີໄຊຊະນະ ແລະມີຄວາມ
ສະຫງົບສຸກ.”

[15]ໂມເຊໄດ້ກາບທູນພຣະອົງວ່າ, “ຖ້າພຣະອົງບໍ່ສະເດັດໄປນຳພວກຂ້ານ້ອຍ ຂໍຢ່າໃຫ້ພວກ
ຂ້ານ້ອຍໜີໄປຈາກທີ່ນີ້ເລີຍ. [16]ຄວາມຈິງແລ້ວ ຖ້າພຣະອົງບໍ່ສະເດັດໄປນຳພວກຂ້ານ້ອຍ ໃຜ
ຈະຮູ້ວ່າຂ້ານ້ອຍກັບໄພ່ພົນຂອງພຣະອົງເປັນທີ່ພໍພຣະໄທຂອງພຣະອົງແລ້ວ ຖ້າພຣະອົງສະເດັດ
ໄປນຳພວກຂ້ານ້ອຍ ໄພ່ພົນພຣະອົງກັບຂ້ານ້ອຍກໍຈະໄດ້ຮັບຄວາມຮັກແພງຈາກພຣະອົງຫລາຍ
ກວ່າຄົນອື່ນໃນໂລກນີ້.”

17ພຣະຜູ້ເປັນເຈົ້າຊົງບອກໂມເຊວ່າ, "ເຮົາຈະເຮັດຕາມທີ່ເຈົ້າເວົ້າ ເພາະວ່າເຮົາພໍໃຈໃນເຈົ້າ
ແລະຮູ້ຈັກເຈົ້າດີ."

18ໂມເຊໄດ້ທູນຂໍວ່າ, "ຂໍຊົງໂຜດສະແດງພຣະລັດສະໝີ ຄວາມຍິ່ງໃຫຍ່ຂອງພຣະອົງໃຫ້ຂ້າ-
ນ້ອຍເບິ່ງແດ່ຖ້ອນ."

19ພຣະຜູ້ເປັນເຈົ້າຊົງຕອບວ່າ, "ເຮົາຈະເຮັດໃຫ້ຄຸນງາມຄວາມດີຂອງເຮົາທັງໝົດ ປະກົດ
ແຈ້ງຕໍ່ໜ້າເຈົ້າ ແລະເຮົາຈະປະກາດຊື່ຂອງເຮົາຄືພຣະຜູ້ເປັນເຈົ້າໃຫ້ເຈົ້າໄດ້ຍິນ ເຮົາສະແດງ
ຄວາມເມດຕາສົງສານຕໍ່ຜູ້ທີ່ເຮົາປະສົງຈະໃຫ້." 20ພຣະຜູ້ເປັນເຈົ້າຍັງຊົງກ່າວຕໍ່ໄປວ່າ, "ເຈົ້າຈະ
ບໍ່ເຫັນໜ້າເຮົາ ເພາະວ່າມະນຸດນັ້ນເຫັນໜ້າເຮົາແລ້ວຈະຕ້ອງຕາຍ." 21ພຣະອົງຊົງກ່າວຕໍ່ໄປວ່າ,
"ເບິ່ງດູ ໃນທີ່ນີ້ມີບ່ອນໜຶ່ງຢູ່ໃກ້ເຮົາ ເຈົ້າຈົ່ງໄປຢືນຢູ່ເທິງຫີນໃນທີ່ນັ້ນ. 22ເມື່ອຣັດສະໝີ ຄວາມ
ຍິ່ງໃຫຍ່ຂອງເຮົາຜ່ານໄປໃກ້ ເຮົາຈະເຊື່ອງເຈົ້າໄວ້ຢູ່ຫລັງຫີນ ແລະຈະເອົາມືຂອງເຮົາປິດບັງ
ເຈົ້າໄວ້ຈົນກວ່າເຮົາໄດ້ຜ່ານພົ້ນໄປແລ້ວ. 23ແລ້ວເຮົາຈະເອົາມືເຮົາອອກ ເຈົ້າຈະເຫັນຫລັງຂອງ
ເຮົາແຕ່ໜ້າຂອງເຮົານັ້ນເບິ່ງບໍ່ໄດ້."

# ບົດທີ 34

## ຊົງປະທານຫີນແຜ່ນທີສອງ

1ພຣະຜູ້ເປັນເຈົ້າຊົງບອກໂມເຊວ່າ ຈົ່ງຕັດຫີນອີກສອງແຜ່ນໃຫ້ຄືແຜ່ນເກົ່າ ແລ້ວເຮົາຈະ
ຈາລຶກຖ້ອຍຄຳຊຶ່ງຢູ່ໃນແຜ່ນຫີນເກົ່າທີ່ເຈົ້າໄດ້ເຮັດແຕກນັ້ນ. 2ຈົ່ງເຮັດໃຫ້ແລ້ວໃນຕອນເຊົ້າມື້ອື່ນ
ແລ້ວໃຫ້ຂຶ້ນມາຫາເຮົາເທິງຈອມພູຊີນາຍ. 3ຢ່າໃຫ້ຜູ້ໃດຂຶ້ນມານຳ ບໍ່ໃຫ້ມີຜູ້ໃດຢູ່ເທິງພູ ບໍ່ໃຫ້ມີ
ຝູງແບ້ ຝູງແກະ ແລະຝູງງົວຄວາຍກິນຫຍ້າຢູ່ຕໍ່ໜ້າພູນີ້." 4ດັ່ງນັ້ນໂມເຊຈຶ່ງເລືອກເອົາຫີນສອງ
ແຜ່ນຄືສອງແຜ່ນທຳອິດ ແລ້ວມື້ອື່ນຕອນເຊົ້າມືດເພິ່ນກໍຖືຫີນນັ້ນຂຶ້ນໄປເທິງພູຊີນາຍຕາມທີ່
ພຣະຜູ້ເປັນເຈົ້າຊົງສັ່ງ.

5ພຣະຜູ້ເປັນເຈົ້າໄດ້ສະເດັດລົງມາດ້ວຍເມກ ຊົງຢືນຢູ່ກັບໂມເຊທີ່ນັ້ນແລະໂມເຊໄດ້ຮ້ອງ
ອອກພຣະນາມຂອງພຣະຜູ້ເປັນເຈົ້າ. 6ພຣະຜູ້ເປັນເຈົ້າໄດ້ສະເດັດຜ່ານໜ້າໂມເຊໄປ ແລະຊົງ
ກ່າວວ່າ, "ພຣະຜູ້ເປັນເຈົ້າ ພຣະຜູ້ເປັນເຈົ້າແມ່ນພຣະເຈົ້າຜູ້ເຕັມປ່ຽມໄປດ້ວຍຄວາມເມດຕາ
ກະລຸນາ ຜູ້ບໍ່ຮ້າຍງ່າຍ ຜູ້ສະແດງຄວາມຮັກໝັ້ນຄົງ ແລະຄວາມສັດຊື່ 7ຜູ້ມີຄວາມຮັກໝັ້ນຄົງ
ຫລາຍຊົ່ວອາຍຸພັນຄົນ ຜູ້ໂຜດໃຫ້ອະໄພການລະເມີດ ຄວາມຊົ່ວຊ້າ ແລະຄວາມບາບ ແຕ່ຈະ
ລົງໂທດລູກຫລານເຫລັນເຖິງສາມສີ່ຊົ່ວອາຍຸຄົນຍ້ອນຄວາມບາບທີ່ພໍ່ແມ່ຂອງເຂົາໄດ້ກະທຳ."

8-9ໂມເຊຈຶ່ງຟ້າວຄຸເຂົ່າລົງດິນນະມັດສະການ ແລ້ວຂາບທູນວ່າ, "ຂ້າແດ່ພຣະຜູ້ເປັນເຈົ້າ
ຖ້າພວກຂ້ານ້ອຍເປັນທີ່ຊອບພຣະໄທພຣະອົງແທ້ ເຖິງແມ່ນປະຊາຊົນນັ້ນຈະຫົວດື້ ກໍຂໍພຣະອົງ
ຊົງໂຜດສະເດັດໄປກັບພວກຂ້ານ້ອຍຖ້ອນ ຂໍຊົງໃຫ້ອະໄພຄວາມຊົ່ວຮ້າຍ ແລະຄວາມບາບຂອງ
ພວກຂ້ານ້ອຍ ຂໍຊົງໂຜດຮັບເອົາພວກຂ້ານ້ອຍເປັນໄພ່ພົນຂອງພຣະອົງເຖີ້ນ."

## ຊົງສັນຍາໃໝ່

10ຕໍ່ມາ ພຣະຜູ້ເປັນເຈົ້າຊົງກ່າວວ່າ, "ເຮົາຈະໃຫ້ຄຳໝັ້ນສັນຍາແກ່ເຈົ້າ ຈະເຮັດການອັດສະ-

ຈັບຕໍ່ໜ້າປະຊາຊົນທັງປວງຂອງເຈົ້າຄືການອັດສະຈັນທີ່ເຮົາບໍ່ເຄີຍເຮັດມາກ່ອນໃນທ່າມກາງຊົນ
ຊາດໃດໆ ທົ່ວໂລກນີ້ ປະຊາຊົນທັງປວງຊຶ່ງຢູ່ກັບເຈົ້າ ຈະໄດ້ເຫັນການກະທຳຂອງອົງ ພຣະຜູ້-
ເປັນເຈົ້າ ເພາະເຮົາຈະກະທຳສິ່ງອັນໜ້າຢ້ານໃຫ້ເຈົ້າເຫັນ.

11ຈົ່ງເຮັດຕາມຂໍ້ບັນຍັດທີ່ເຮົາຈະໃຫ້ເຈົ້າໃນມື້ນີ້ ເຮົາຈະຂັບໄລ່ຊາວອະໂມຣິດ ຊາວການາ-
ອານ ຊາວຮິດຕີ ຊາວເປຣີຊີ ຊາວຮີວີ ແລະຊາວເຢບຸດໄປເສຍຈາກເຈົ້າ. 12ຈົ່ງລະວັງໃຫ້ດີ
ເຈົ້າຢ່າຜູກສຳພັນໃດໆ ກັບຊົນຊາດທີ່ເຈົ້າຈະໄປເຖິງນັ້ນ ເພາະວ່າມັນຈະເປັນສິ່ງທຳລາຍພວກ
ເຈົ້າ. 13ແຕ່ພວກເຈົ້າຈົ່ງທຳລາຍແທ່ນບູຊາ ທັບເສົາຫີນສັກສິດແລະຕັດໄມ້ສັກສິດຂອງພວກເຂົາ
ຖິ້ມ. 14ເຈົ້າຢ່າໄດ້ຂາບໄຫວ້ພະອື່ນເລີຍ ເພາະວ່າເຮົາເປັນ ພຣະຜູ້ເປັນເຈົ້າ ຜູ້ຫວງແຫນພວກ
ເຈົ້າ. 15ເພາະເມື່ອເຈົ້າຂາບໄຫວ້ ແລະບູຊາພະຂອງເຂົາ ພວກເຈົ້າກໍຈະບໍ່ສັດຊື່ຄືກັບຍິງໂສເພນີ
ແລະພວກເຂົາຈະເຊີນພວກເຈົ້າໄປຮ່ວມດ້ວຍ ພວກເຈົ້າອາດຈະກິນອາຫານທີ່ພວກເຂົາໄດ້
ຖວາຍບູຊານັ້ນ. 16ລູກຊາຍຂອງເຈົ້າອາດຈະແຕ່ງງານກັບລູກຍິງໂສເພນີ ພວກເຂົາຈະຊັກຊວນ
ລູກຊາຍຂອງເຈົ້າເຮັດບໍ່ສັດຊື່ຕໍ່ເຮົາ ແລະຮັບໃຊ້ພະຂອງເຂົາ. 17ເຈົ້າຢ່າຫລໍ່ຮູບພະສຳລັບຕົນ.

18ເຈົ້າຈົ່ງຖືຮັກສາພິທີກິນລ້ຽງເຂົ້າຈີ່ບໍ່ໃສ່ເຊື້ອແປ້ງ ຕາມທີ່ເຮົາໄດ້ສັ່ງໄວ້ ໃຫ້ກິນເຂົ້າຈີ່ບໍ່ໃສ່
ເຊື້ອຈົນຄົບເຈັດມື້ໃນເດືອນທີໜຶ່ງ ເພາະວ່າພວກເຈົ້າອອກຈາກ ເອຢິບ ໃນເດືອນນີ້.

19ລູກຊາຍກົກທຸກຄົນ ຫລື ງົວ ແລະແກະເຖິກທຸກໂຕຂອງເຈົ້າເປັນຂອງເຮົາ.

20ແຕ່ເຈົ້າຈົ່ງເອົາລູກແກະມາໄຖ່ເອົາລູກລໍໂຕທຳອິດໄວ້ ຖ້າເຈົ້າບໍ່ໄຖ່ໄວ້ ໃຫ້ຫັກຄໍມັນເສຍ
ລູກຊາຍກົກທຸກຄົນຂອງເຈົ້າໃຫ້ໄຖ່ໄວ້ ຢ່າໃຫ້ຜູ້ໃດມາເຝົ້າເຮົາໂດຍບໍ່ມີເຄື່ອງຖວາຍ.

21ເຈົ້າຈົ່ງເຮັດວຽກແຕ່ໃນຫົກມື້ ສ່ວນມື້ຖ້ວນເຈັດໃຫ້ເຈົ້າຢຸດພັກ ເຖິງຈະຢູ່ໃນລະຫວ່າງໄຖນາ
ແລະກ່ຽວເຂົ້າກໍຕາມ.

22ຈົ່ງຈັດງານສະຫລອງສັບປະດາ ຄືງານກິນລ້ຽງສະຫລອງໝາກຜົນທຳອິດຂອງລະດູກ່ຽວ
ເຂົ້າບາເລ ແລະງານກິນລ້ຽງສະຫລອງການເກັບກ່ຽວໃນປາຍປີ. 23ບັນດາຜູ້ຊາຍທັງຫລາຍຂອງ
ພວກເຈົ້າ ໃຫ້ມາຫາເຮົາຜູ້ເປັນ ພຣະເຈົ້າ ຂອງຊາວ ອິສຣາເອນ ປີລະສາມເທື່ອ. 24ຫລັງຈາກເຮົາ
ໄດ້ຂັບໄລ່ຊົນຊາດທັງຫລາຍອອກໄປພົ້ນໜ້າເຈົ້າ ແລະໄດ້ຂະຫຍາຍເຂດແດນຂອງເຈົ້າໃຫ້
ກວ້າງຂວາງອອກໄປແລ້ວ ຈະບໍ່ມີໃຜພະຍາຍາມຍຶດເອົາປະເທດຂອງເຈົ້າ ໃນລະຫວ່າງພວກ
ເຈົ້າໄປຫາເຮົາປີລະສາມເທື່ອນັ້ນ.

25ຢ່າໄດ້ຖວາຍເຂົ້າຈີ່ທີ່ໃສ່ເຊື້ອແປ້ງ ເມື່ອພວກເຈົ້າເຜົາສັດຖວາຍເຮົາ ຢ່າເກັບຊີ້ນສັດທີ່ຂ້າ
ກິນລ້ຽງໃນງານສະຫລອງປັດສະຄາໄວ້ຈົນເຖິງມື້ເຊົ້າ.

26ຈົ່ງນຳເອົາພືດຜົນທຳອິດອັນດີທີ່ສຸດໃນນາຂອງເຈົ້າ ມາຖວາຍໃນພຣະວິຫານຂອງ ພຣະຜູ້-
ເປັນເຈົ້າ ເຈົ້າຢ່າຕົ້ມຊີ້ນລູກແບ້ດ້ວຍນ້ຳນົມແມ່ຂອງມັນ.”

27ພຣະຜູ້ເປັນເຈົ້າ ຊົງບອກ ໂມເຊ ວ່າ, “ຈົ່ງຂຽນຄຳເຫລົ່ານີ້ໄວ້ ເພາະວ່າຄຳໝັ້ນສັນຍາທີ່ເຮົາ
ໄດ້ໃຫ້ໄວ້ກັບເຈົ້າ ແລະພວກ ອິສຣາເອນ ມີຢູ່ໃນຄຳເຫລົ່ານີ້ແລ້ວ.” 28ໂມເຊ ໄດ້ເຝົ້າ ພຣະຜູ້ເປັນ-
ເຈົ້າ ຢູ່ທີ່ນັ້ນເປັນເວລາສີ່ສິບມື້ສີ່ສິບຄືນ ໂດຍບໍ່ໄດ້ກິນອາຫານ ແລະດື່ມນ້ຳເລີຍ ເພິ່ນໄດ້ຈາລຶກ
ຂໍ້ຄວາມຂອງຄຳໝັ້ນສັນຍາ ຄືພຣະບັນຍັດສິບປະການໄວ້ໃນແຜ່ນຫີນນີ້.

## ໂມເຊລົງມາຈາກພູ

29ເມື່ອ ໂມເຊ ຖືແຜ່ນຫີນພຣະບັນຍັດສອງ ແຜ່ນລົງມາຈາກພູຊີນາຍ ນັ້ນ ໂມເຊ ບໍ່ຮູ້ວ່າຜິວໜ້າ
ຂອງຕົນສ່ອງແສງ ຄືໜ້າຂອງເພິ່ນໄດ້ສ່ອງແສງຍ້ອນ ພຣະຜູ້ເປັນເຈົ້າ ໄດ້ຊົງສົນທະນາກັບເພິ່ນ.
30ເມື່ອ ອາໂຣນ ກັບຊາວ ອິສຣາເອນ ທັງປວງ ເຫັນໜ້າ ໂມເຊ ສ່ອງແສງ ພວກເຂົາກໍບໍ່ກ້າເຂົ້າໄປ
ໃກ້ເພິ່ນ. 31ແຕ່ ໂມເຊ ໄດ້ເອີ້ນພວກເຂົາມາ ແລ້ວ ອາໂຣນ ກັບບັນດາຫົວໜ້າຂອງຊຸມນຸມຊົນໄດ້
ເຂົ້າມາຫາເພິ່ນ ເພິ່ນຈຶ່ງສົນທະນາກັບເຂົາ. 32ເມື່ອຊາວ ອິສຣາເອນ ເຂົ້າມາໃກ້ແລ້ວ ໂມເຊ ກໍ
ບອກກັບເຂົາທັງຫລາຍຕາມທີ່ ພຣະຜູ້ເປັນເຈົ້າ ຊົງບອກເທິງພູຊີນາຍ. 33-34ເມື່ອ ໂມເຊ ເວົ້າສຸດກໍ
ເອົາຜ້າປົກໜ້າໄວ້ ເມື່ອໃດເພິ່ນເຂົ້າໄປເຝົ້າ ພຣະຜູ້ເປັນເຈົ້າ ໃນຫໍເຕັນສັກສິດ ເພິ່ນກໍເອົາຜ້ານັ້ນ
ອອກຈົນກວ່າຈະກັບອອກມາ ຄັນເພິ່ນອອກມາແລ້ວກໍເລົ່າຂໍ້ຄວາມທັງໝົດທີ່ ພຣະຜູ້ເປັນເຈົ້າ ຊົງ
ສັ່ງສູ່ຊາວ ອິສຣາເອນ ຟັງ. 35ແລະຊາວ ອິສຣາເອນ ກໍໄດ້ເຫັນຜິວໜ້າຂອງ ໂມເຊ ສ່ອງແສງ ແລ້ວ
ໂມເຊ ກໍໄດ້ເອົາຜ້າປົກໜ້າໄວ້ຈົນກວ່າຈະໄດ້ເຂົ້າເຝົ້າ ພຣະຜູ້ເປັນເຈົ້າ ອີກ.

# ບົດທີ 35

## ຊົງຫ້າມບໍ່ໃຫ້ດັງໄຟໃນວັນສະບາໂຕ

1ຝ່າຍ ໂມເຊ ໃຫ້ຊຸມນຸມຊົນ ອິສຣາເອນ ທັງໝົດປະຊຸມກັນ ແລ້ວກ່າວແກ່ເຂົາວ່າ “ຕໍ່ໄປນີ້ເປັນ
ສິ່ງຊຶ່ງ ພຣະຜູ້ເປັນເຈົ້າ ບັນຊາໃຫ້ທ່ານທັງຫລາຍປະຕິບັດຕາມ 2ຈົ່ງເຮັດວຽກໃນກຳນົດຫົກມື້ ແຕ່
ມື້ທີເຈັດໃຫ້ເຈົ້າຖືເປັນມື້ບໍລິສຸດ ເປັນວັນສະບາໂຕແກ່ ພຣະຜູ້ເປັນເຈົ້າ ສຳລັບໃຊ້ພັກ ຜູ້ໃດເຮັດ
ວຽກໃນວັນນັ້ນຕ້ອງຖືກລົງໂທດເຖິງຕາຍ 3ໃນວັນສະບາໂຕນັ້ນຢ່າດັງໄຟ ຕະຫລອດທົ່ວບ່ອນ
ອາໄສຂອງທ່ານ”
4ໂມເຊ ໄດ້ກ່າວແກ່ຊຸມນຸມຊົນ ອິສຣາເອນ ທັງໝົດວ່າ “ຕໍ່ໄປນີ້ເປັນສິ່ງຊຶ່ງ ພຣະຜູ້ເປັນເຈົ້າ ຊົງ
ບັນຊາວ່າ 5ທ່ານທັງຫລາຍຈົ່ງນຳຂອງຈາກຂອງທີ່ມີຢູ່ມາຖວາຍ ພຣະຜູ້ເປັນເຈົ້າ ຜູ້ໃດມີນ້ຳໃຈ
ກວ້າງຂວາງໃຫ້ຜູ້ນັ້ນນຳຂອງມາຖວາຍ ພຣະຜູ້ເປັນເຈົ້າ ຄືທອງຄຳ ເງິນ ແລະທອງສຳລິດ
6ຜ້າສີຟ້າ ສີມ່ວງ ສີແດງເຂັ້ມ ຜ້າປ່ານເນື້ອລະອຽດ ແລະຂົນແບ້ 7ໜັງແກະໂຕຜູ້ຍ້ອມສີແດງ
ໜັງທາຄັດ[ກ] ແລະໄມ້ກະຖິນເທດ[ຂ] 8ນ້ຳມັນໄຕ້ຕະກຽງ ເຄື່ອງເທດສຳລັບປະສົມນ້ຳມັນເຈີມ
ແລະປຸງເຄື່ອງຫອມສຳລັບການເຜົາຖວາຍ 9ພອຍສີນ້ຳເຂົ້າ ແລະພອຍຕ່າງໆສຳລັບຝັງເຮັດ ເອ-
ໂຟດ ແລະທັບຊວງ 10ຈົ່ງໃຫ້ທຸກຄົນທີ່ສະຫລຽວສະຫລາດໃນໝູ່ພວກເຈົ້າ ພາກັນມາເຮັດສິ່ງທັງ
ປວງ ຊຶ່ງ ພຣະຜູ້ເປັນເຈົ້າ ຊົງບັນຊາໃຫ້ເຮັດນັ້ນ 11ຄືຫໍເຕັນ ເຕັນ ແລະຜ້າຄຸມຫໍເຕັນ ຂໍເກາະ
ແລະໄມ້ຂອບ ໄລ ເສົາ ແລະຖານຮອງຮັບເສົາຂອງຫໍເຕັນນັ້ນ 12ຫີບ ແລະໄມ້ຄານຫາມຫີບ
ພຣະທີ່ນັ່ງກະລຸນາກັບຜ້າກັ້ງບັງຕາ 13ໂຕະກັບໄມ້ຄານຫາມໂຕະ ເຄື່ອງໃຊ້ທັງປວງສຳລັບໂຕະ
ແລະເຂົ້າຈີ່ໜ້າພຣະພັກ 14ຄັນຕະກຽງທີ່ໃຫ້ແສງສະຫວ່າງກັບເຄື່ອງອຸປະກອນ ແລະຕະກຽງ
ແລະນ້ຳມັນໄຕ້ຕະກຽງ 15ແທ່ນເຜົາເຄື່ອງຫອມກັບໄມ້ຄານຫາມແທ່ນນັ້ນ ນ້ຳມັນເຈີມ ແລະ
ເຄື່ອງຫອມສຳລັບເຜົາຖວາຍ ແລະຜ້າກັ້ງບັງຕາສຳລັບປະຕູຢູ່ປະຕູຫໍເຕັນ 16ແທ່ນເຜົາເຄື່ອງບູ-

[ກ]ໜຶ່ງຮິນໃກ້ກັບສີລິດ [ຂ]ທາຄັດແມ່ນສັດທະເລທີ່ມີໜັງລະອຽດດີ ພາສາອັງກິດ sea cow ຫຼື dugong

ຊາກັບຕາຂ່າຍທອງສຳລິດ ໄມ້ຄານຫາມ ແລະເຄື່ອງໃຊ້ທັງປວງຂອງແທ່ນ ຂັນກັບພານຮອງ
ຂັນນັ້ນ [17]ຜ້າກັ້ງສຳລັບກັ້ນລານທຳເຕັນກັບເສົາ ແລະຖານຮອງຮັບເສົາ ແລະຜ້າກັ້ງສຳລັບປະຕູ
ລານ [18]ຫລັກໝຸດສຳລັບທຳເຕັນ ແລະຫລັກໝຸດສຳລັບລານທຳເຕັນພ້ອມກັບເຊືອກ [19]ເສື້ອຍົດ
ຫຍິບດ້ວຍຝີມືປະນີດສຳລັບແຕ່ງເວລາບົວລະບັດໃນຫ້ອງບໍລິສຸດ ຄືເສື້ອຍົດບໍລິສຸດສຳລັບອາ-
ໂຣນປະໂລຫິດ ແລະເສື້ອຍົດສຳລັບລູກຊາຍຂອງລາວ ເພື່ອໃຊ້ປະຕິບັດໃນຕຳແໜ່ງປະໂລຫິດ”
[20]ແລ້ວຊຸມນຸມຊົນ ອິສຣາເອນທັງໝົດກໍແຍກຍ້າຍກັນຈາກໂມເຊໄປ [21]ທຸກຄົນທີ່ມີໃຈປາຖະ-
ໜາ ແລະທີ່ມີໃຈສະໝັກກໍນຳສິ່ງຂອງມາຖວາຍ ພຣະຜູ້ເປັນເຈົ້າ ສຳລັບທຳເຕັນແຫ່ງຊຸມນຸມແລະ
ການບົວລະບັດທັງຫລາຍ ແລະສຳລັບເຄື່ອງຍົດບໍລິສຸດ [22]ເຂົາຈຶ່ງພາກັນມາທັງຊາຍແລະຍິງ
ບັນດາຜູ້ມີນ້ຳໃຈສະໝັກນຳມາຊຶ່ງເຂັມຄັດ ຕຸ້ມຫູ ແຫວນ ແລະປອກແຂນ ເປັນທອງຮູບປະພັນ
ທັງນັ້ນຄືທຸກຄົນນຳທອງຄຳມາແກວ່ງໄປແກວ່ງມາຖວາຍ ພຣະຜູ້ເປັນເຈົ້າ
[23]ສ່ວນທຸກຄົນທີ່ມີດ້າຍສີຟ້າ ສີມ່ວງ ສີແດງເຂັ້ມ ຫລືທີ່ມີຜ້າປ່ານເນື້ອລະອຽດ ຂົນແບ້ໜັງ
ແກະໂຕຜູ້ຍ້ອມສີແດງ ແລະໜັງທາຄັດ ກໍເອົາຂອງເຫລົ່ານັ້ນມາຖວາຍ [24]ທຸກຄົນທີ່ມີເງິນ ຫລື
ທອງສຳລິດຈະຖວາຍກໍນຳມາຖວາຍ ພຣະຜູ້ເປັນເຈົ້າ ແລະທຸກຄົນທີ່ມີໄມ້ກະຖິນເທດໃຊ້ການໄດ້
ກໍນຳໄມ້ນັ້ນມາຖວາຍ [25]ສ່ວນຜູ້ຍິງທັງປວງທີ່ຊຳນານກໍປັ່ນດ້າຍດ້ວຍມືຂອງຕົນ ແລ້ວນຳດ້າຍທີ່
ປັ່ນນັ້ນມາຖວາຍທັງສີຟ້າ ສີມ່ວງ ສີແດງເຂັ້ມ ແລະເສັ້ນປ່ານປັ່ນຢ່າງດີ [26]ຝ່າຍບັນດາຜູ້ຍິງທີ່
ມີໃຈປາຖະໜາກໍປັ່ນຂົນແບ້ດ້ວຍຄວາມຊຳນານ
[27]ບັນດາຜູ້ນຳກໍໄດ້ເອົາພອຍສີນ້ຳເຂົ້າ ແລະພອຍຕ່າງໆມາສຳລັບຝັງເຮັດເອໂຟດ ແລະທັບ
ຊວງ [28]ກັບເຄື່ອງເທດ ແລະນ້ຳມັນໄຕ້ຕະກຽງ ນ້ຳມັນເຈີມ ແລະນ້ຳມັນປຸງເຄື່ອງຫອມສຳລັບ
ເຜົາບູຊາ
[29]ຄົນອິສຣາເອນທັງຊາຍຍິງທຸກຄົນທີ່ມີໃຈສະໝັກນຳຂອງຖວາຍສຳລັບການງານຕ່າງໆ ຊຶ່ງ
ພຣະຜູ້ເປັນເຈົ້າຊົງບັນຊາໂມເຊໄວ້ໃຫ້ປະຕິບັດຕາມນັ້ນ ກໍໄດ້ນຳຂອງມາ ຕາມໃຈຖວາຍແກ່
ພຣະຜູ້ເປັນເຈົ້າ

## ເບຊາເລນແລະໂອໂຮລີອັບເປັນຊ່າງ ແລະຜູ້ສອນ

[30]ໂມເຊຈຶ່ງກ່າວແກ່ຄົນອິສຣາເອນວ່າ “ເບິ່ງກ່ອນທ່ານ ພຣະຜູ້ເປັນເຈົ້າໄດ້ຊົງອອກຊື່ເບ-
ຊາເລນລູກຊາຍອູຣີ ຜູ້ເປັນລູກຊາຍຂອງຮູເຣຕະກຸນຢູດາ [31]ແລະພຣະອົງໄດ້ຊົງໃຫ້ຜູ້ນັ້ນປະ-
ກອບດ້ວຍພຣະວິນຍານຂອງພຣະເຈົ້າໃຫ້ມີສະຕິປັນຍາ ແລະຄວາມເຂົ້າໃຈ ແລະຄວາມຮູ້ໃນ
ຊ່າງຝີມືທັງປວງ [32]ເພື່ອຈະຄິດປະດິດລວດລາຍຢ່າງສະຫລາດ ເຮັດດ້ວຍທອງຄຳ ແລະເງິນ
ແລະທອງສຳລິດ [33]ແລະເຈຍລະໄນພອຍຕ່າງໆສຳລັບຝັງໃນກະໂບກ ແລະການແກະສະຫລັກ
ໄມ້ ຄືໃຫ້ມີຝີມືດີເລີດທຸກຢ່າງ [34]ອີກອັນໜຶ່ງ ພຣະອົງຊົງດົນໃຈໃຫ້ຜູ້ນັ້ນມີນ້ຳໃຈທີ່ຈະສອນຄົນ
ອື່ນໄດ້ດ້ວຍ ພ້ອມດ້ວຍໂອໂຮລຽບລູກຊາຍອາຮີສາມັກຕະກຸນດານ [35]ຄົນທັງສອງນີ້ ພຣະອົງ
ຊົງປະທານສະຕິປັນຍາແກ່ຈິດໃຈຂອງເຂົາໃຫ້ມີຄວາມສາມາດໃນການທີ່ຈະເຮັດວຽກໄດ້ທຸກຢ່າງ
ເຊັ່ນຊ່າງຝີມື ຊ່າງອອກແບບ ແລະຊ່າງດ້າຍສີ ຄືສີຟ້າ ສີມ່ວງ ສີແດງເຂັ້ມ ແລະເສັ້ນປ່ານປັ່ນ
ຢ່າງດີ ແລະຊ່າງຖັກ ຄືເຮັດການຊ່າງຝີມືໄດ້ທຸກຢ່າງ ແລະເປັນຊ່າງອອກແບບທີ່ສະຫລາດ

ດ້ວຍ"

# ບົດທີ 36

## ປະຊາຊົນຖວາຍຢ່າງຫລວງຫລາຍ ແລະການສ້າງຫໍເຕັນກ້າວໜ້າ

[1]ຝ່າຍ ເບຊາເລນ ແລະ ໂອໂຮລຽບ ກັບຄົນທັງປວງທີ່ສະຫລຽວສະຫລາດ ຊຶ່ງພຣະຜູ້ເປັນ-
ເຈົ້າຊົງປະທານສະຕິປັນຍາ ແລະຄວາມເຂົ້າໃຈໃຫ້ພໍທີ່ຈະເຮັດການທຸກຢ່າງໃນການສ້າງບໍລິສຸດ
ສະຖານ ຕາມທີ່ພຣະຜູ້ເປັນເຈົ້າຊົງບັນຊາໄວ້ແລ້ວທຸກປະການ

[2]ໂມເຊຈຶ່ງເອີ້ນເບຊາເລນ ແລະ ໂອໂຮລຽບກັບຄົນທັງປວງທີ່ສະຫລຽວສະຫລາດ ຊຶ່ງພຣະຜູ້-
ເປັນເຈົ້າຊົງປະທານສະຕິປັນຍາ ແລະຄວາມປາຖະໜາແກ່ຈິດໃຈຂອງເຂົາ ໃຫ້ມາເຮັດວຽກ
[3]ຄົນເຫລົ່ານີ້ໄດ້ຮັບຂອງຖວາຍທັງໝົດນັ້ນຈາກ ໂມເຊ ທີ່ຄົນ ອິສຣາເອນ ນຳມາຖວາຍ ເພື່ອນຳໄປ
ເຮັດບໍລິສຸດສະຖານ ປະຊາຊົນຍັງນຳຂອງທີ່ສະໝັກໃຈຈະຖວາຍມາຖວາຍອີກທຸກໆຕອນເຊົ້າ
[4]ຝ່າຍຄົນທັງປວງທີ່ສະຫລຽວສະຫລາດຊຶ່ງເຮັດວຽກຕ່າງໆຢູ່ບໍລິສຸດສະຖານນັ້ນມາເຖິງແລ້ວ
ຕ່າງກໍຢຸດເຮັດວຽກຫນ້າທີ່ຂອງຕົນ [5]ພາກັນມາບອກໂມເຊວ່າ "ປະຊາຊົນນຳຂອງມາຖວາຍ
ຫລາຍເກີນຄວາມຕ້ອງການທີ່ຈະໃຊ້ໃນງານນັ້ນໆ ຊຶ່ງພຣະຜູ້ເປັນເຈົ້າຊົງບັນຊາໃຫ້ເຮັດ"

[6]ໂມເຊຈຶ່ງສັ່ງໃຫ້ປະກາດໄປທົ່ວຄ້າຍວ່າ "ຢ່າໃຫ້ຊາຍຍິງນຳຂອງສຳລັບເຮັດບໍລິສຸດສະຖານ
ມາຖວາຍອີກເລີຍ" ເຫດສະນັ້ນ ປະຊາຊົນຈຶ່ງບໍ່ໄດ້ນຳເຄື່ອງຂອງມາຖວາຍອີກ [7]ເພາະເຄື່ອງ
ຂອງທີ່ພວກເຂົາມີຢູ່ແລ້ວກໍພໍສຳລັບງານທັງປວງນັ້ນ ແລະຍັງມີເຫລືອອີກ

[8]ບັນດາຊ່າງຜູ້ສະຫລຽວສະຫລາດໄດ້ເຮັດຫໍເຕັນດ້ວຍຜ້າກັ້ງສິບຜືນ ດ້ວຍຜ້າປ່ານເນື້ອລະ-
ອຽດ ດ້ວຍດ້າຍສີຟ້າ ສີມ່ວງ ສີແດງເຂັ້ມ ມີຮູບເຄຣຸບທີ່ຊ່າງຝີມືອອກແບບໄວ້ [9]ຜ້າກັ້ງຜືນໜຶ່ງ
ຍາວຊາວແປດສອກ ກວ້າງສີ່ສອກ ຜ້າກັ້ງທຸກຜືນເທົ່າກັນ [10]ຜ້າກັ້ງຫ້າຜືນ ພວກເຂົາເຮັດໃຫ້
ເກາະຕິດກັນ ແລະອີກຫ້າຜືນນັ້ນເກາະຕິດກັນດ້ວຍ [11]ພວກເຂົາເຮັດຫູດ້ວຍດ້າຍສີຟ້າ ຕິດໄວ້
ຕາມຂອບຜ້າກັ້ງດ້ານນອກສຸດຊຸດທີໜຶ່ງ ແລະຕາມຂອບຜ້າກັ້ງດ້ານນອກສຸດຊຸດທີສອງກໍເຮັດຫູ
ໄວ້ຄືກັນ [12]ຜ້າກັ້ງຜືນໜຶ່ງ ພວກເຂົາເຮັດຫູຫ້າສິບຫູ ແລະຕາມຂອບຜ້າກັ້ງຊຸດທີ່ສອງພວກເຂົາກໍ
ເຮັດຫູຫ້າສິບຫູໃຫ້ຊື່ກັນ [13]ແລະພວກເຂົາເຮັດຂໍທອງຄຳຫ້າສິບຂໍ ສຳລັບໃຊ້ເກາະຜ້າກັ້ງເພື່ອໃຫ້
ຫໍເຕັນເປັນຜືນດຽວກັນ

[14]ພວກເຂົາເຮັດຜ້າກັ້ງດ້ວຍຂົນແບ້ສຳລັບເປັນເຕັນຄຸມຫໍເຕັນອີກສິບເອັດຜືນ [15]ຜ້າກັ້ງຜືນໜຶ່ງ
ຍາວສາມສິບສອກ ກວ້າງສີ່ສອກ ທັງສິບເອັດຜືນເທົ່າກັນ [16]ພວກເຂົາເກາະຜ້າກັ້ງຫ້າຜືນໃຫ້
ຕິດກັນຕ່າງຫາກ ແລະຜ້າກັ້ງອີກຫົກຜືນກໍເກາະຕິດກັນອີກຕ່າງຫາກ [17]ແລະພວກເຂົາເຮັດຫູຫ້າ
ສິບຫູຕິດກັບຜ້າກັ້ງດ້ານນອກສຸດຊຸດທີໜຶ່ງ ແລະເຮັດຫູຫ້າສິບຫູຕິດກັບຂອບຜ້າກັ້ງດ້ານນອກ
ສຸດຊຸດທີສອງ [18]ພວກເຂົາເຮັດຂໍທອງສຳລິດຫ້າສິບຂໍ ເກາະຂໍໃສ່ຫູໃຫ້ຕິດຕໍ່ເປັນເຕັນຫລັງດຽວ
ກັນ [19]ພວກເຂົາເຮັດເຄື່ອງດາດເຕັນດ້ວຍໜັງແກະໂຕຜູ້ຍ້ອມສີແດງຊັ້ນໜຶ່ງ ແລະຄຸມທັບດ້ວຍ
ໜັງທາຄັດອີກຊັ້ນໜຶ່ງ

[20]ພວກເຂົາເຮັດໄມ້ຂອບສຳລັບຫໍເຕັນດ້ວຍໄມ້ກະຖິນເທດຍົກຕັ້ງຂຶ້ນຊື່ໆ [21]ໄມ້ກອບນັ້ນຍາວ

ແຜ່ນລະສິບສອກ ກວ້າງສອກຄືບ [22]ມີເດືອຍຂອບລະສອງເດືອຍ ເດືອຍຂອບໜຶ່ງມີໄມ້ຕອກຕິດ
ກັບເດືອຍອີກຂອບໜຶ່ງ ພວກເຂົາໄດ້ເຮັດໄມ້ຂອບຫໍເຕັນທັງໝົດຢ່າງນີ້ [23]ພວກເຂົາໄດ້ເຮັດໄມ້
ຂອບຫໍເຕັນດັ່ງນີ້ ທາງທິດໃຕ້ພວກເຂົາໃຊ້ຊາວແຜ່ນ [24]ພວກເຂົາເຮັດຖານດ້ວຍເງິນສີ່ສິບຖານ
ສຳລັບໄມ້ຂອບຊາວແຜ່ນ ກ້ອງໄມ້ຂອບແຜ່ນໜຶ່ງມີຖານຮອງຮັບແຜ່ນລະສອງຖານສຳລັບສວມ
ໃສ່ເດືອຍສອງອັນ [25]ເບື້ອງທີສອງຂອງຫໍເຕັນທາງທິດເໜືອນັ້ນ ພວກເຂົາເຮັດໄມ້ຂອບຊາວ
ແຜ່ນ [26]ພວກເຂົາເຮັດຖານເງິນຮອງຮັບສີ່ສິບຖານ ກ້ອງໄມ້ຂອບມີຖານແຜ່ນລະສອງຖານ
[27]ສ່ວນເບື້ອງຫລັງທິດຕາເວັນຕົກຂອງຫໍເຕັນ ພວກເຂົາເຮັດໄມ້ຂອບຫົກແຜ່ນ [28]ພວກເຂົາເຮັດ
ໄມ້ຂອບອີກສອງແຜ່ນສຳລັບມຸມຫໍເຕັນເບື້ອງຫລັງ [29]ໄມ້ຂອບນັ້ນ ຂ້າງລຸ່ມໃຫ້ແຍກກັນ ແຕ່
ຕອນເທິງຍອດຕິດຕໍ່ກັນທີ່ຫູທຳອິດ ພວກເຂົາເຮັດຢ່າງນີ້ ເພື່ອໃຫ້ເກີດມຸມສອງມຸມ [30]ຄືລວມ
ເປັນໄມ້ຂອບແປດແຜ່ນນຳກັນ ແລະຖານເງິນສິບຫົກອັນ ກ້ອງໄມ້ຂອບມີຖານແຜ່ນລະສອງ
ຖານ

[31]ພວກເຂົາເຮັດໄລດ້ວຍໄມ້ກະຖິນເທດຫ້າອັນສຳລັບຄັດໄມ້ຂອບຝາຫໍເຕັນເບື້ອງໜຶ່ງ [32]ແລະ
ໄລອີກຫ້າອັນສຳລັບຄັດໄມ້ຂອບຝາຫໍເຕັນອີກເບື້ອງໜຶ່ງ ແລະໄລອີກຫ້າອັນສຳລັບຄັດໄມ້ຂອບ
ຝາຫໍເຕັນທາງທິດຕາເວັນຕົກ [33]ພວກເຂົາເຮັດໄລໂຕກາງໃຫ້ຮ້ອຍຕອນກາງຂອງໄມ້ຂອບສຳລັບ
ຄັດຝາຕັ້ງແຕ່ມຸມໜຶ່ງໄປຈຸອີກມຸມໜຶ່ງ [34]ພວກເຂົາຫຸ້ມໄມ້ຂອບເຫລົ່ານັ້ນດ້ວຍທອງຄຳ ແລະເຮັດ
ຫູຂອບດ້ວຍທອງຄຳສຳລັບຕອກໄລ ແລະໄລນັ້ນເຂົາຫຸ້ມດ້ວຍທອງຄຳເຊັ່ນກັນ

[35]ພວກເຂົາເຮັດຜ້າກັ້ງນັ້ນດ້ວຍດ້າຍສີຟ້າ ສີມ່ວງ ສີແດງເຂັ້ມ ແລະດ້ວຍຜ້າປ່ານເນື້ອລະ-
ອຽດ ມີຮູບເຄຣຸບທີ່ຊ່າງຝີມືອອກແບບໄວ້ [36]ພວກເຂົາເຮັດເສົາໄມ້ກະຖິນເທດສີ່ເສົາຫຸ້ມດ້ວຍ
ທອງຄຳ ຂໍຕິດເສົານັ້ນກໍເປັນທອງຄຳ ພວກເຂົາໄດ້ຫລໍ່ຖານເງິນສີ່ອັນສຳລັບຮອງຮັບເສົານັ້ນ

[37]ແລະເຮັດບັງຕາທີ່ປະຕູຫໍເຕັນນັ້ນດ້ວຍດ້າຍສີຟ້າ ສີມ່ວງ ສີແດງເຂັ້ມ ແລະຜ້າປ່ານເນື້ອ
ລະອຽດປະກອບດ້ວຍຝີມືຊ່າງຖັກ [38]ແລະເຮັດເສົາຫ້າຕົ້ນສຳລັບຜ້າກັ້ງນັ້ນພ້ອມດ້ວຍຂໍເກາະ
ບົວລົ້ມ ແລະຮາວຍຶດເສົານັ້ນຫຸ້ມດ້ວຍທອງຄຳ ແຕ່ຖານຫ້າຖານສຳລັບຮອງຮັບເສົານັ້ນເຮັດ
ດ້ວຍທອງສຳລິດ

# ບົດທີ 37

## ຫີບຄຳໝັ້ນສັນຍາ ແລະພຣະທີ່ນັ່ງກະລຸນາ

[1]ເບຊາເລນເຮັດຫີບດ້ວຍໄມ້ກະຖິນເທດ ຍາວສອງສອກຄືບ ກວ້າງສອກຄືບ ແລະສູງສອກ-
ຄືບ [2]ຫີບນັ້ນຫຸ້ມດ້ວຍທອງຄຳບໍລິສຸດ ທັງຂ້າງໃນແລະຂ້າງນອກ ແລະໄດ້ເຮັດກະຈັງຮອບຫີບ
ນັ້ນດ້ວຍທອງຄຳ [3]ພວກເຂົາຫລໍ່ຫູທອງຄຳສີ່ຫູຕິດໄວ້ທີ່ມຸມທັງສີ່ ເບື້ອງນີ້ສອງຫູ ແລະເບື້ອງນັ້ນ
ສອງຫູ [4]ພວກເຂົາເຮັດຄານຫາມດ້ວຍໄມ້ກະຖິນເທດຫຸ້ມດ້ວຍທອງຄຳ [5]ພວກເຂົາສອດຄານ
ຫາມເຂົ້າທີ່ຫູຂ້າງຫີບສຳລັບໃຊ້ຍົກຫີບນັ້ນ

[6]ແລ້ວເຮັດພຣະທີ່ນັ່ງກະລຸນາດ້ວຍທອງຄຳບໍລິສຸດ ຍາວສອງສອກຄືບ ກວ້າງສອກຄືບ
[7]ພວກເຂົາເຮັດເຄຣຸບທອງຄຳສອງຮູບ ໂດຍໃຊ້ຄ້ອນເຮັດ ຕັ້ງໄວ້ທີ່ປາຍພຣະທີ່ນັ່ງກະລຸນາທັງ

ສອງຂ້າງ [8]ພວກເຂົາເຮັດເຄຣຸບໄວ້ທີ່ປາຍພຣະທີ່ນັ່ງກະລຸນາຂ້າງລະຮູບ ພວກເຂົາເຮັດເຄຣຸບ
ໂດຍໃຫ້ຕອນປາຍທັງສອງຂ້າງເປັນເນື້ອດຽວກັບພຣະທີ່ນັ່ງກະລຸນາ [9]ໃຫ້ເຄຣຸບກາງປີກອອກ
ເບື້ອງເທິງປົກພຣະທີ່ນັ່ງກະລຸນາໄວ້ດ້ວຍປີກ ແລະໃຫ້ຫັນໜ້າເຂົ້າຫາກັນ ຄືໃຫ້ເຄຣຸບຫັນໜ້າມາ
ຫາພຣະທີ່ນັ່ງກະລຸນາ

## ໂຕະສຳລັບເຂົ້າຈີ່ໜ້າພຣະພັກ ແລະຄັນຕະກຽງ

[10]ພວກເຂົາເອົາໄມ້ກະຖິນເທດເຮັດໂຕະໜ່ວຍໜຶ່ງ ຍາວສອງສອກ ກວ້າງໜຶ່ງສອກ ແລະ
ສູງສອກຄືບ [11]ພວກເຂົາຫຸ້ມໂຕະນັ້ນດ້ວຍທອງຄຳບໍລິສຸດ ແລະເຮັດກະຈັງທອງຄຳຮອບໂຕະ
ນັ້ນດ້ວຍ [12]ພວກເຂົາເຮັດຮອບຂອບໂຕະນັ້ນກວ້າງໜຶ່ງຝາມືໂດຍຮອບ ແລ້ວເຮັດກະຈັງທອງຄຳ
ປະກອບຮອບນັ້ນ [13]ພວກເຂົາຫລໍ່ຫູທອງຄຳສີ່ອັນຕິດໄວ້ທີ່ມຸມໂຕະທັງສີ່ຂາໂຕະ [14]ຫູນັ້ນຕິດກັບ
ກະຈັງ ສຳລັບສອດຄານຫາມໂຕະ [15]ພວກເຂົາເຮັດຄານຫາມດ້ວຍໄມ້ກະຖິນເທດຫຸ້ມດ້ວຍ
ທອງຄຳສຳລັບຫາມໂຕະນັ້ນ [16]ແລະເຮັດເຄື່ອງໃຊ້ສຳລັບໂຕະນັ້ນມີ ຖ້ວຍ, ບ່ວງ ກັບຈອກນໍ້າ
ແລະໂຖນໍ້າ ທີ່ໃຊ້ລິນເຄື່ອງດື່ມບູຊາຊຶ່ງເຮັດດ້ວຍທອງຄຳບໍລິສຸດທັງໝົດ

[17]ພວກເຂົາເຮັດຄັນຕະກຽງອັນໜຶ່ງດ້ວຍທອງຄຳບໍລິສຸດ ພວກເຂົາໃຊ້ຄ້ອນຕີເຮັດຄັນຕະກຽງ
ໃຫ້ທັງລຳຕົວ ກິ່ງ ດອກ ດອກຕູມ ແລະກີບຕິດເປັນເນື້ອດຽວກັນກັບຄັນຕະກຽງນັ້ນ [18]ມີກິ່ງຫົກ
ກິ່ງແຍກອອກຈາກລຳຄັນຕະກຽງນັ້ນຂ້າງລະສາມກິ່ງ [19]ແຕ່ລະກິ່ງມີດອກຄືດອກໄມ້ໝາກບົກ
ສາມດອກ ທຸກໆດອກມີດອກຕູມ ແລະກີບ ເປັນດັ່ງນີ້ທັງຫົກກິ່ງ ຊຶ່ງຍື່ນອອກຈາກລຳຄັນຕະ-
ກຽງ [20]ສຳລັບລຳຄັນຕະກຽງນັ້ນມີດອກສີ່ດອກເໝືອນດອກໄມ້ໝາກບົກທັງດອກຈູມ ແລະກີບ
[21]ກ້ອງກິ່ງທຸກໆຄູ່ທັງຫົກກິ່ງທີ່ລຳຄັນຕະກຽງນັ້ນ ໃຫ້ມີດອກຈູມເປັນເນື້ອດຽວກັນກັບຄັນຕະກຽງ
[22]ດອກຈູມ ແລະກິ່ງເປັນເນື້ອດຽວກັນກັບຄັນຕະກຽງ ເຮັດທຸກສ່ວນເປັນເນື້ອດຽວກັນດ້ວຍທອງ-
ຄຳບໍລິສຸດ ແລະໃຊ້ຄ້ອນເຮັດ [23]ພວກເຂົາເຮັດຕະກຽງເຈັດໜ່ວຍສຳລັບຄັນຕະກຽງນັ້ນ ມີດຕັດ
ໄສ້ຕະກຽງ ແລະຖາດໃສ່ມີດຕັດດ້ວຍທອງຄຳບໍລິສຸດ [24]ຄັນຕະກຽງ ແລະເຄື່ອງໃຊ້ທັງໝົດສຳ-
ລັບຄັນຕະກຽງນັ້ນ ພວກເຂົາເຮັດດ້ວຍທອງຄຳບໍລິສຸດໜັກໜຶ່ງຕະລັນ

## ແທ່ນບູຊາສຳລັບເຜົາເຄື່ອງຫອມ ແລະນໍ້າມັນເຈີມ

[25]ເຂົາສ້າງແທ່ນບູຊາສຳລັບເຜົາເຄື່ອງຫອມດ້ວຍໄມ້ກະຖິນເທດ ຍາວສອກໜຶ່ງ ກວ້າງສອກ
ໜຶ່ງ ເປັນຮູບສີ່ຫລ່ຽມມົນທົນ ແລະສູງສອງສອກ ຍອດທີ່ມຸມແທ່ນນັ້ນກໍເປັນໄມ້ທ່ອນດຽວກັນກັບ
ແທ່ນ [26]ພວກເຂົາຫຸ້ມແທ່ນນັ້ນດ້ວຍທອງຄຳບໍລິສຸດ ທັງດ້ານເທິງແລະດ້ານຂ້າງທັງສີ່ດ້ານ
ແລະຍອດດ້ວຍ ແລະເຮັດກະຈັງທອງຄຳຮອບແທ່ນນັ້ນ [27]ພວກເຂົາເຮັດຫູທອງຄຳສອງຫູຕິດ
ໄວ້ກ້ອງກະຈັງທັງສອງຂ້າງ ກົງກັນຂ້າມກັນ ເປັນບ່ອນສຳລັບສອດໃສ່ໄມ້ຄານຫາມ [28]ພວກ
ເຂົາເຮັດໄມ້ຄານຫາມນັ້ນດ້ວຍໄມ້ກະຖິນເທດຫຸ້ມດ້ວຍທອງຄຳ

[29]ພວກເຂົາປຸງນໍ້າມັນເຈີມອັນບໍລິສຸດ ແລະປຸງເຄື່ອງຫອມບໍລິສຸດດ້ວຍເຄື່ອງເທດຕາມສິລະ
ປະຂອງຊ່າງປຸງ

# ບົດທີ 38

## ແທ່ນເຄື່ອງເຜົາບູຊາ ແລະຂັນທອງສຳລິດ

1ພວກເຂົາເຮັດແທ່ນເຄື່ອງເຜົາບູຊາດ້ວຍໄມ້ກະຖິນເທດ ຍາວຫ້າສອກ ກວ້າງຫ້າສອກ ເປັນ
ແທ່ນສີ່ຫລ່ຽມມົນທົນ ສູງສາມສອກ 2ພວກເຂົາເຮັດຍອດຕິດໄວ້ທັງສີ່ມຸມຂອງແທ່ນນັ້ນ ຍອດ
ນັ້ນເປັນໄມ້ເນື້ອດຽວກັນກັບແທ່ນບູຊາ ພວກເຂົາຫຸ້ມແທ່ນດ້ວຍທອງສຳລິດ 3ພວກເຂົາເຮັດ
ເຄື່ອງໃຊ້ເທິງແທ່ນນັ້ນທຸກຢ່າງ ຄື ປັ້ນໝໍ້ ຊ້ວນ ຊາມ ຂໍເກາະຊີ້ນ ແລະຖາດຮອງໄຟ ເຄື່ອງ-
ໃຊ້ສຳລັບແທ່ນທັງໝົດນັ້ນ ພວກເຂົາເຮັດດ້ວຍທອງສຳລິດ 4ແລະພວກເຂົາເອົາທອງສຳລິດເຮັດ
ເປັນຕາຂ່າຍປະດັບແທ່ນນັ້ນໃຫ້ຢູ່ກ້ອງກະຈັງຂອງແທ່ນ ແລະຫ້ອຍຢູ່ຕັ້ງແຕ່ກາງແທ່ນລົງມາ
5ພວກເຂົາຫລໍ່ຫູສີ່ຫູຕິດທີ່ມຸມທັງສີ່ຂອງຕາຂ່າຍທອງສຳລິດສຳລັບສອດໄມ້ຄານຫາມ 6ພວກເຂົາ
ເຮັດໄມ້ຄານຫາມດ້ວຍໄມ້ກະຖິນເທດ ແລະຫຸ້ມດ້ວຍທອງສຳລິດ 7ພວກເຂົາສອດໄມ້ຄານນັ້ນ
ໄວ້ໃນຫູຢູ່ຂ້າງແທ່ນສຳລັບຫາມ ພວກເຂົາເຮັດແທ່ນນັ້ນດ້ວຍໄມ້ແປ້ນ ໃຫ້ຂ້າງໃນເປັນໂໝ້ງ
ທາງກາງ

8ພວກເຂົາເຮັດຂັນທອງສຳລິດ ແລະພານຮອງຂັນທອງສຳລິດຈາກແວ່ນແຍງຂອງບັນດາຜູ້-
ຍິງທີ່ບົວລະບັດ ປະຕູຫໍເຕັນແຫ່ງຊຸມນຸມ

## ລານ ແລະປະຕູ

9ແລະພວກເຂົາເຮັດລານໄວ້ພ້ອມ ໃຫ້ຮົ້ວທາງທິດໃຕ້ມີຜ້າບັງ ເຮັດດ້ວຍຜ້າປ່ານເນື້ອລະອຽດ
ຍາວຮ້ອຍສອກ 10ມີເສົາຊາວຕົ້ນກັບຖານທອງສຳລິດຮອງຮັບເສົາຊາວຖານ ຂໍຕິດເສົາ ແລະ
ຮາວຍຶດເສົານັ້ນເຮັດດ້ວຍເງິນ 11ທາງທິດເໜືອມີຜ້າບັງຍາວຮ້ອຍສອກ ກັບເສົາຊາວຕົ້ນແລະ
ຖານທອງສຳລິດຊາວຖານ ຂໍຕິດເສົາ ແລະຮາວຍຶດເສົານັ້ນເຮັດດ້ວຍເງິນ 12ສ່ວນທາງທິດຕາ-
ເວັນຕົກມີຜ້າບັງຍາວຫ້າສິບສອກ ກັບເສົາສິບຕົ້ນ ແລະຖານຮອງຮັບເສົາສິບຖານ ຂໍຕິດເສົາ
ແລະຮາວຍຶດເສົາເຮັດດ້ວຍເງິນ 13ທິດຕາເວັນອອກໃຊ້ຜ້າຍາວຫ້າສິບສອກ 14ຜ້າບັງຣິມປະຕູ
ຂ້າງໜຶ່ງຍາວສິບຫ້າສອກ ມີເສົາສາມຕົ້ນແລະຖານຮອງຮັບເສົາສາມຖານ 15ແລະອີກຂ້າງໜຶ່ງ
ຣິມປະຕູຂ້າງນີ້ ແລະຂ້າງນັ້ນ ມີຜ້າບັງຍາວສິບຫ້າສອກ ມີເສົາສາມຕົ້ນ ແລະຖານຮອງຮັບເສົາ
ສາມຖານ 16ຜ້າບັງລານໂດຍຮອບນັ້ນເຮັດດ້ວຍຜ້າປ່ານເນື້ອລະອຽດ 17ຖານຮອງຮັບເສົານັ້ນ
ເຮັດດ້ວຍທອງສຳລິດ ຂໍຕິດເສົາແລະຮາວຍຶດເສົາເປັນເງິນ ແລະບົວລົ້ມຂອງເສົານັ້ນຫຸ້ມດ້ວຍ
ເງິນ ແລະເສົາທຸກຕົ້ນຂອງລານມີຮາວຍຶດເສົາເຮັດດ້ວຍເງິນ 18ຜ້າກັ້ງຢູ່ປະຕູລານນັ້ນແສ່ວດ້ວຍ
ຝີມືຂອງຊ່າງແສ່ວ ເປັນສີຟ້າ ສີມ່ວງ ສີແດງເຂັ້ມ ແລະຜ້າປ່ານ ຍາວຊາວສອກ ສູງຫ້າສອກ
ເທົ່າກັນກັບຜ້າບັງລານ 19ມີເສົາສີ່ຕົ້ນກັບຖານຮອງຮັບເສົາສີ່ຖານເປັນທອງສຳລິດ ຂໍຕິດເສົາ
ເຮັດດ້ວຍເງິນ ແລະສ່ວນທີ່ຫຸ້ມບົວລົ້ມກັບຮາວຍຶດເສົາເປັນເງິນ 20ຫລັກໝຸດທຸກຫລັກຂອງຫໍ-
ເຕັນ ແລະຂອງລານຮອບຫໍເຕັນນັ້ນເຮັດດ້ວຍທອງສຳລິດ

21ນີ້ແຫລະ ເປັນບັນຊີສິ່ງຂອງທີ່ໃຊ້ໃນຫໍເຕັນ ຄືຫໍເຕັນພຣະບັນຍັດ ຊຶ່ງພວກເຂົາທັງຫລາຍ
ນັບຕາມຄຳສັ່ງຂອງ ໂມເຊ ມີຄົນ ເລວີ ຈັດເຮັດຕາມບັນຊາຂອງ ອີທາມາ ລູກຊາຍ ອາໂຣນ ປະໂລ-
ຫິດ 22ສ່ວນ ເບຊາເລນ ລູກຊາຍ ອູຣີ ຜູ້ເປັນລູກຊາຍຂອງ ຮູເຣ ແຫ່ງຕະກຸນ ຢູດາ ເຮັດສິ່ງສາລະ-

ພັດຊຶ່ງ ພຣະຜູ້ເປັນເຈົ້າ ໄດ້ຊົງບັນຊາ ໂມເຊ ແລ້ວ 23ຜູ້ຮ່ວມງານກັບລາວຄື ໂອໂຮລຽບ ລູກຊາຍ
ອາຮີສາມັກ ແຫ່ງຕະກຸນດານ ເປັນຊ່າງຝີມື ຊ່າງອອກແບບ ແລະຊ່າງດ້າຍສີໃຊ້ດ້າຍສີຟ້າ ສີ-
ມ່ວງ ສີແດງເຂັ້ມ ແລະຜ້າປ່ານເນື້ອລະອຽດ

24ທອງຄຳທັງໝົດຊຶ່ງພວກເຂົາໃຊ້ໃນການສ້າງຫ້ອງບໍລິສຸດນັ້ນ ຄືທອງຄຳທີ່ພວກເຂົານຳມາ
ຖວາຍ ມີນ້ຳໜັກຊາວເກົ້າຕະລັນ ເຈັດຮ້ອຍສາມສິບເຊເຂ ຕາມເຊເຂແຫ່ງບໍລິສຸດສະຖານ

25ເງິນຕາມຈຳນວນຊຸມນຸມຊົນໄດ້ນັບໄວ້ ລວມເປັນໜຶ່ງຮ້ອຍຕະລັນກັບໜຶ່ງພັນເຈັດຮ້ອຍເຈັດ
ສິບຫ້າເຊເຂ ຕາມເຊເຂແຫ່ງບໍລິສຸດສະຖານ 26ຄົນລະເບຄາ ຄືເຄິ່ງໜຶ່ງຂອງເຊເຂຕາມເຊເຂ
ຂອງບໍລິສຸດສະຖານ ຊຶ່ງເກັບມາຈາກທຸກຄົນທີ່ໄປຈົດທະບຽນສຳມະໂນຄົວ ຄືນັບຕັ້ງແຕ່ອາຍຸ
ຊາວປີຂຶ້ນໄປລວມທັງໝົດຫົກແສນສາມພັນຫ້າຮ້ອຍຫ້າສິບຄົນ 27ເງິນໜຶ່ງຮ້ອຍຕະລັນນັ້ນ ພວກເຂົາໃຊ້
ຫລໍ່ເຮັດຖານຮອງຮັບເສົາຂອງບໍລິສຸດສະຖານ ແລະຖານຂອງຜ້າກັ້ງ ຖານຮ້ອຍຖານເປັນເງິນ
ໜຶ່ງຮ້ອຍຕະລັນ ຄືຖານລະໜຶ່ງຕະລັນ 28ແຕ່ເງິນໜຶ່ງພັນເຈັດຮ້ອຍເຈັດສິບຫ້າເຊເຂນັ້ນ ພວກ
ເຂົາໃຊ້ເຮັດຂໍສຳລັບເສົາ ແລະຫຸ້ມບົວລົ້ມຂອງເສົານັ້ນ ແລະເຮັດຮາວຍຶດເສົາດ້ວຍ

29ທອງສຳລິດທີ່ພວກເຂົານຳມາຖວາຍໜັກເຈັດສິບຕະລັນ ກັບສອງພັນສີ່ຮ້ອຍເຊເຂ 30ທອງ
ສຳລິດນັ້ນ ພວກເຂົາໃຊ້ເຮັດຖານປະຕູຫໍເຕັນແຫ່ງຊຸມນຸມແລະເຮັດແທ່ນທອງສຳລິດ ແລະຕາ
ຂ່າຍທອງສຳລິດປະດັບແທ່ນ ແລະເຮັດເຄື່ອງໃຊ້ທັງໝົດຂອງແທ່ນນັ້ນ 31ເຮັດຖານອ້ອມຮອບ
ລານ ແລະຖານຢູ່ປະຕູລານ ຫລັກໝຸດທັງໝົດຂອງຫໍເຕັນ ແລະຫລັກໝຸດຮອບລານນັ້ນ

# ບົດທີ 39

## ເຄື່ອງຍົດບໍລິສຸດສຳລັບອາໂຣນ

1ດ້າຍສີຟ້າ ສີມ່ວງ ສີແດງເຂັ້ມນັ້ນ ພວກເຂົາໃຊ້ເຮັດເສື້ອຍົດຫຍິບດ້ວຍຝີມືປະນີດສຳລັບໃສ່
ເວລາບົວລະບັດໃນຫ້ອງບໍລິສຸດ ແລະໄດ້ເຮັດເຄື່ອງຍົດບໍລິສຸດສຳລັບອາໂຣນ ຕາມທີ່ພຣະຜູ້-
ເປັນເຈົ້າຊົງບັນຊາແກ່ໂມເຊ

2ພວກເຂົາເຮັດເອໂຟດດ້ວຍທອງຄຳ ດ້ວຍດ້າຍສີຟ້າ ສີມ່ວງ ສີແດງເຂັ້ມ ແລະຜ້າປ່ານເນື້ອ
ລະອຽດ 3ພວກເຂົາຕີຄຳແຜ່ອອກເປັນແຜ່ນບາງໆແລ້ວຕັດເປັນເສັ້ນໆເພື່ອຈະຖັກເຂົ້າກັບດ້າຍ
ສີຟ້າ ເຂົ້າກັບດ້າຍສີມ່ວງ ເຂົ້າກັບດ້າຍສີແດງເຂັ້ມ ແລະເຂົ້າກັບເສັ້ນປ່ານຢ່າງດີດ້ວຍຝີມືຊ່າງ
ຊຳນານ 4ພວກເຂົາເຮັດແຖບຕິດໄວ້ທີ່ບ່າເພື່ອຍຶດເອໂຟດ ໃຫ້ຕິດກັບຣິມຕອນເທິງທັງສອງ
ຕ່ອນ 5ສາຍຮັດຢ່າງປະນີດສຳລັບຮັດທັບເອໂຟດນັ້ນ ພວກເຂົາເຮັດດ້ວຍວັດຖຸຢ່າງດຽວກັນ
ແລະຝີມືຢ່າງດຽວກັບເອໂຟດ ຄືເຮັດດ້ວຍທອງຄຳ ດ້າຍສີຟ້າ ສີມ່ວງ ສີແດງເຂັ້ມ ແລະຜ້າ
ປ່ານເນື້ອລະອຽດຕາມທີ່ພຣະຜູ້ເປັນເຈົ້າຊົງບັນຊາແກ່ໂມເຊ

6ພວກເຂົາເອົາພອຍສີນ້ຳເຂົ້າຝັງໄວ້ໃນກະໂປກທອງຄຳຊຶ່ງມີລວດລາຍລະອຽດ ແລະຈາລຶກ
ເປັນຊື່ລູກອິສຣາເອນ 7ແລ້ວຕິດໄວ້ກັບເອໂຟດເທິງແຖບບ່ານັ້ນເພື່ອໃຫ້ພອຍນັ້ນເປັນທີ່ລະນຶກ
ເຖິງບັນດາລູກແຫ່ງອິສຣາເອນ ຕາມທີ່ພຣະຜູ້ເປັນເຈົ້າຊົງບັນຊາແກ່ໂມເຊ

8ພວກເຂົາເຮັດທັບຊວງດ້ວຍຝີມືຊ່າງອອກແບບໃຫ້ຝີມືຄືກັບເຮັດເອໂຟດ ຄືເຮັດດ້ວຍທອງ-

ຄຳ ດ້າຍສີຟ້າ ສີມ່ວງ ສີແດງເຂັ້ມ ແລະຜ້າປ່ານເນື້ອລະອຽດ 9ພວກເຂົາເຮັດທັບຊວງເປັນຮູບ
ສີ່ຫລ່ຽມມົນທົນ ພັບທົບກາງ ຍາວຄືບໜຶ່ງ ກວ້າງຄືບໜຶ່ງ ເປັນສອງທົບນຳກັນ 10ພວກເຂົາຝັງ
ພອຍສີ່ແຖວເທິງທັບຊວງນັ້ນ ແຖວທີ່ໜຶ່ງຝັງທັບທິມ ລູກລາຄຳ[ກ] ແລະພອຍສີແດງເຂັ້ມ
11ແຖວທີ່ສອງຝັງມໍລະກົດ[ຂ] ໄພທູນ ແລະເພັດ 12ແຖວທີ່ສາມຝັງນິນ ໂມລາ ແລະພອຍສີມ່ວງ
13ແຖວທີ່ສີ່ຝັງພອຍຂຽວ ພອຍສີນ້ຳເຂົ້າ ແລະພອຍສີນ້ຳຕານ ພອຍທັງໝົດນີ້ ພວກເຂົາໄດ້ຝັງ
ໃນກະໂບກລວດລາຍລະອຽດເຮັດດ້ວຍທອງຄຳ 14ພອຍເຫລົ່ານັ້ນມີຊື່ລູກອິສຣາເອນສິບສອງຊື່
ຈາລຶກໄວ້ ມີຊື່ຕະກຸນທຸກຕະກຸນຕາມລຳດັບສິບສອງຕະກຸນ

15ພວກເຂົາເຮັດສາຍສ້ອຍຖັກກຽວດ້ວຍທອງຄຳບໍລິສຸດສຳລັບທັບຊວງ 16ແລະພວກເຂົາທັງ-
ຫລາຍເຮັດກະໂບກລວດລາຍລະອຽດດ້ວຍທອງຄຳສອງອັນ ແລະຫູທອງຄຳສອງຫູ ຕິດໄວ້ທີ່
ປາຍທັງສອງຂອງທັບຊວງ 17ພວກເຂົາຫ້ອຍສາຍສ້ອຍທີ່ເຮັດດ້ວຍທອງຄຳນັ້ນໃນຫູຢູ່ປາຍທັບ
ຊວງ 18ແລະປາຍສາຍສ້ອຍອີກສອງຂ້າງນັ້ນ ພວກເຂົາເຮັດຕິດກັບກະໂບກລວດລາຍລະອຽດ
ທັງສອງ ໃຫ້ຕິດໄວ້ທາງໜ້າຢູ່ແຖບຍຶດ ເອໂຟດ ທັງສອງຂ້າງເທິງບ່າ 19ພວກເຂົາເຮັດຫູທອງຄຳ
ສອງອັນຕິດໄວ້ທີ່ຂອບທາງລຸ່ມທັງສອງຂອງທັບຊວງດ້ານໃນຕິດ ເອໂຟດ 20ແລະພວກເຂົາເຮັດ
ແຫວນຄຳອີກສອງວົງຜູກຕິດກັນກັບທາງລຸ່ມຂອງສາຍຮັດ ທັງສອງຂ້າງທາງໜ້າບ່າໄຫລ່ຂອງ
ເສື້ອຄຸມຊັ້ນ ເອໂຟດ. 21ແລະພວກເຂົາຜູກທັບຊວງນັ້ນຕິດກັບ ເອໂຟດ ດ້ວຍ ໃຊ້ດ້າຍຖັກສີຟ້າ
ຮ້ອຍຜູກຢູ່ຫູ ໃຫ້ທັບຊວງທັບສາຍຮັດຊຶ່ງຖັກດ້ວຍຝີມືປະນີດຂອງ ເອໂຟດ ເພື່ອບໍ່ໃຫ້ທັບຊວງ
ຫລຸດໄປຈາກ ເອໂຟດ ຕາມທີ່ພຣະຜູ້ເປັນເຈົ້າຊົງບັນຊາແກ່ໂມເຊ

22ພວກເຂົາເຮັດເສື້ອຄຸມເຂົ້າຊຸດກັບ ເອໂຟດ ດ້ວຍດ້າຍສີຟ້າລ້ວນເປັນຝີມືຖັກ 23ແລະຮູກາງ
ຜືນເສື້ອນັ້ນ ເຂົາເຮັດເປັນຄໍເສື້ອເຊັ່ນດຽວກັບຄໍເສື້ອທະຫານ ແລະມີແຂບຮອບຄໍເພື່ອບໍ່ໃຫ້ຂາດ
24ຕີນເສື້ອຄຸມ ພວກເຂົາທັງຫລາຍແສ່ວເປັນລູກທັບທິມ ໃຊ້ດ້າຍສີຟ້າ ສີມ່ວງ ສີແດງເຂັ້ມ
ແລະຜ້າປ່ານເນື້ອລະອຽດ 25ພວກເຂົາເຮັດໝາກຕຸ້ມດ້ວຍທອງຄຳບໍລິສຸດແລ້ວຕິດໝາກຕຸ້ມລະ-
ຫວ່າງທັບທິມຮອບປາຍເສື້ອຄຸມນັ້ນ 26ຄືໝາກຕຸ້ມໜ່ວຍໜຶ່ງ ກັບທັບທິມໜ່ວຍໜຶ່ງ ແລະໝາກ
ຕຸ້ມອີກໜ່ວຍໜຶ່ງ ທັບທິມອີກໜ່ວຍໜຶ່ງປຽນກັນດັ່ງນີ້ ຮອບປາຍເສື້ອຄຸມນັ້ນ ສຳລັບສວມໃສ່ເວ-
ລາບົວລະບັດພຣະອົງ ຕາມທີ່ພຣະຜູ້ເປັນເຈົ້າຊົງບັນຊາແກ່ໂມເຊ

27ພວກເຂົາເຮັດເສື້ອດ້ວຍຜ້າປ່ານເນື້ອລະອຽດຂອງຊ່າງຕ່ຳແຜ່ນສຳລັບ ອາໂຣນ ແລະສຳລັບ
ລູກຊາຍຂອງລາວ. 28ແລະເຮັດມາລາດ້ວຍຜ້າປ່ານເນື້ອລະອຽດ ແລະມາລາງາມດ້ວຍຜ້າປ່ານ
ເນື້ອລະອຽດ ແລະເຮັດໂສ້ງດ້ວຍຜ້າປ່ານເນື້ອລະອຽດ 29ແລະເຮັດສາຍຮັດດ້ວຍຜ້າປ່ານປັ່ນ
ເນື້ອລະອຽດ ແລະແສ່ວດ້ວຍດ້າຍສີຟ້າ ສີມ່ວງ ສີແດງເຂັ້ມ ດ້ວຍຝີມືຊ່າງປັກແສ່ວ ຕາມທີ່
ພຣະຜູ້ເປັນເຈົ້າຊົງບັນຊາແກ່ໂມເຊ 30ພວກເຂົາເຮັດແຜ່ນມົງກຸດບໍລິສຸດດ້ວຍທອງຄຳບໍລິສຸດ
ຈາລຶກຄຳວ່າ "ບໍລິສຸດແກ່ພຣະຜູ້ເປັນເຈົ້າ" ໄວ້ຄືກັບແກະຕາປະທັບ 31ແລ້ວເອົາດ້າຍຖັກສີຟ້າ
ຜູກແຜ່ນທອງຄຳນັ້ນໄວ້ເທິງມາລາ ຕາມທີ່ພຣະຜູ້ເປັນເຈົ້າຊົງບັນຊາແກ່ໂມເຊ

32ດັ່ງນີ້ແຫລະ ເຂົາເຮັດວຽກສຳລັບຫໍເຕັນຂອງເຕັນແຫ່ງຊຸມນຸມໃຫ້ສຳເລັດທຸກປະການ

---

[ກ]ໄມ້ຊະນິດໜຶ່ງ ພາສາອັງກິດ acacia [ຂ]ເພັດພອຍຊະນິດໜຶ່ງ ພາສາອັງກິດ topaz

ພຣະຜູ້ເປັນເຈົ້າ ຊົງບັນຊາ ແກ່ ໂມເຊ ໄວ້ຢ່າງໃດ ຄົນ ອິສຣາເອນ ກໍ ເຮັດຢ່າງນັ້ນທຸກປະການ
33ພວກເຂົາຈຶ່ງໄດ້ນຳຫໍເຕັນມາມອບໄວ້ກັບ ໂມເຊ ທັງເຕັນແລະເຄື່ອງໃຊ້ທັງປວງຄື ຂໍ ໄມ້ຂອບ
ໄລ ເສົາ ແລະຖານຮອງຮັບເສົາ 34ເຄື່ອງມຸງຫໍເຕັນທາງເທິງເຮັດດ້ວຍໜັງແກະໂຕຜູ້ຍ້ອມສີ-
ແດງ ແລະໜັງເຫງັນ ແລະຜ້າກັ້ງສຳລັບບັງຕາ 35ຫີບພຣະບັນຍັດກັບໄມ້ຄານຫາມຂອງຫີບນັ້ນ
ແລະພຣະທີ່ນັ່ງກະລຸນາ 36ໂຕະກັບ ເຄື່ອງໃຊ້ທັງໝົດ ເທິງ ໂຕະ ນັ້ນ ແລະ ເຂົ້າຈີ່ໜ້າພຣະພັກ
37ຄັນຕະກຽງບໍລິສຸດກັບຕະກຽງ ຄືຕະກຽງຢູ່ທາງເຂົ້າເຕັນແລະເຄື່ອງໃຊ້ທັງໝົດຂອງຄັນຕະກຽງ
ນັ້ນ ແລະນ້ຳມັນສຳລັບໄຕ້ຕະກຽງ 38ແທ່ນທອງຄຳ ນ້ຳມັນເຈີມ ເຄື່ອງຫອມສຳລັບເຜົາບູຊາ
ແລະຜ້າບັງຕາສຳລັບປະຕູຫໍເຕັນ 39ແທ່ນບູຊາທອງສຳລິດ ກັບຕາຂ່າຍທອງສຳລິດສຳລັບແທ່ນ
ນັ້ນ ໄມ້ຄານຫາມ ແລະເຄື່ອງໃຊ້ທັງໝົດຂອງແທ່ນ ຂັນກັບພານຮອງຂັນ 40ຜ້າກັ້ງບັງລານ
ເສົາກັບຖານຮອງຮັບ ຜ້າບັງຕາປະຕູລານ ເຊືອກ ແລະຫລັກໝຸດສຳລັບລານ ແລະເຄື່ອງໃຊ້
ທັງໝົດສຳລັບການບົວລະບັດໃນຫໍເຕັນ ສຳລັບເຕັນແຫ່ງຊຸມນຸມ 41ເສື້ອຍົດຫຍິບດ້ວຍຝີມືປະນີດ
ສຳລັບສວມໃສ່ໃນເວລາບົວລະບັດໃນຫ້ອງບໍລິສຸດ ເຄື່ອງຍົດບໍລິສຸດສຳລັບ ອາໂຣນ ປະໂລຫິດ
ເຄື່ອງຍົດສຳລັບລູກຊາຍ ອາໂຣນ ສຳລັບໃຊ້ສວມໃສ່ໃນເວລາປະຕິບັດຕຳແໜ່ງປະໂລຫິດ
42ສິ່ງສາລະພັດທີ່ພຣະຜູ້ເປັນເຈົ້າ ຊົງບັນຊາແກ່ ໂມເຊ ແລ້ວ ຊົນຊາດ ອິສຣາເອນ ເຮັດໃຫ້ສຳ-
ເລັດທຸກປະການ 43ໂມເຊ ຈຶ່ງກວດເບິ່ງງານທັງປວງ ແລະເບິ່ງແມ ພຣະຜູ້ເປັນເຈົ້າຊົງບັນຊາໄວ້
ຢ່າງໃດ ພວກເຂົາກໍເຮັດສຳເລັດທຸກຢ່າງ ໂມເຊ ຈຶ່ງອວຍພອນແກ່ພວກເຂົາ.

# ບົດທີ 40

## ການຕັ້ງຫໍເຕັນສັກສິດ

1ພຣະຜູ້ເປັນເຈົ້າ ຊົງບອກ ໂມເຊວ່າ, 2"ໃນມື້ທີໜຶ່ງຂອງເດືອນທີໜຶ່ງຈົ່ງຕັ້ງຫໍເຕັນສັກສິດ 3ຈົ່ງ
ເອົາຫີບພຣະບັນຍັດໄວ້ໃນທີ່ນັ້ນ ແລະໃຫ້ກາງຜ້າກັ້ງບັງຫີບນັ້ນໄວ້. 4ຈົ່ງຍົກໂຕະເຂົ້າມາຕັ້ງໄວ້
ແລະຈັດເຄື່ອງເທິງໂຕະໄວ້ຕາມບ່ອນຂອງມັນ ແລ້ວນຳຫລັກຕະກຽງເຂົ້າມາແລະໄຕ້ຕະກຽງເທິງ
ຫລັກຕະກຽງນັ້ນ. 5ໃຫ້ຕັ້ງ ແທ່ນຄຳສຳລັບ ເຜົາ ເຄື່ອງຫອມໄວ້ຕໍ່ໜ້າຫີບພຣະບັນຍັດ ແລ້ວກາງ
ຜ້າກັ້ງໄວ້ທີ່ປະຕູຫໍເຕັນສັກສິດ. 6ຈົ່ງຕັ້ງ ແທ່ນເຄື່ອງ ເຜົາບູຊາໄວ້ຕໍ່ໜ້າຫໍເຕັນສັກສິດ. 7ແລະຕັ້ງ
ຂັນໄວ້ລະຫວ່າງຫໍເຕັນສັກສິດກັບແທ່ນ ແລ້ວຕັກນ້ຳໃສ່ໄວ້ໃນຂັນນັ້ນ. 8ໃຫ້ເຮັດຮົ້ວອ້ອມຮອບ
ແລະ ກາງ ຜ້າກັ້ງ ໄວ້ທີ່ ປະຕູຮົ້ວ. 9ໃຫ້ ເອົານ້ຳມັນ ຫອມ ທາ ຫໍເຕັນ ສັກສິດ ກັບ ທຸກສິ່ງ ທີ່ຢູ່ ໃນ ນັ້ນ
ແລະຈົ່ງ ເຮັດ ໃຫ້ ເຄື່ອງ ໃຊ້ທັງໝົດສັກສິດ ແລ້ວຫໍເຕັນນັ້ນຈະເປັນບ່ອນສັກສິດ. 10ໃຫ້ເຈີມແທ່ນ
ເຄື່ອງ ເຜົາບູຊາ ແລະ ເຄື່ອງໃຊ້ທັງໝົດໃນ ແທ່ນ ຈົ່ງເຮັດໃຫ້ແທ່ນນັ້ນສັກສິດດ້ວຍວິທີນີ້ ແລ້ວ
ແທ່ນນັ້ນຈະສັກສິດທີ່ສຸດ. 11ໃຫ້ເຈີມຂັນກັບພານຮອງຂັນ ແລະເຮັດໃຫ້ສັກສິດດ້ວຍ.
12ໃຫ້ນຳ ອາໂຣນ ກັບພວກລູກຊາຍຂອງລາວມາຍັງປະຕູຫໍເຕັນສັກສິດ ແລ້ວໃຊ້ນ້ຳລ້າງຊຳລະ
ຕົວລາວ. 13ແລະນຸ່ງຫົ່ມເຄື່ອງຍົດໃຫ້ ອາໂຣນ ພ້ອມທັງເຈີມນ້ຳມັນ ແລະເຮັດໃຫ້ລາວບໍລິສຸດເພື່ອ
ລາວຈະໄດ້ເປັນປະໂລຫິດຜູ້ບົວລະບັດເຮົາ. 14ຈົ່ງນຳພວກລູກຊາຍຂອງ ອາໂຣນ ມາ ແລະນຸ່ງ
ເສື້ອຍົດໃຫ້. 15ແລ້ວເຈີມພວກເຂົາເໝືອນເຈີມບິດາຂອງພວກເຂົາ ເພື່ອພວກເຂົາຈະໄດ້ເປັນປະ-

ໂລຫິດຜູ້ບົວລະບັດເຮົາ ການເຈີມນັ້ນຈະເຮັດໃຫ້ພວກເຂົາໄດ້ເປັນປະໂລຫິດຕະຫລອດໄປເປັນ-
ນິດ.”

16-17ໂມເຊໄດ້ເຮັດຕາມພຣະຜູ້ເປັນເຈົ້າຊົງສັ່ງທຸກຢ່າງ ດັ່ງນັ້ນ ເຕັນສັກສິດຈຶ່ງຖືກຕັ້ງຂຶ້ນໃນ
ມື້ທີໜຶ່ງ ແລະເດືອນທີໜຶ່ງຂອງປີທີສອງ ຫລັງຈາກອອກມາຈາກເອຢິບແລ້ວ. 18ໂມເຊໄດ້ຕິດ
ຕັ້ງຫໍເຕັນສັກສິດດັ່ງນີ້ ຄືໄດ້ຕັ້ງຕີນໃສ່ໄມ້ແປ້ນ ສອດຮາວ ແລະຕັ້ງຫລັກຂຶ້ນ 19ເພິ່ນໄດ້ກາງຜ້າ
ເຕັນເທິງຫໍເຕັນສັກສິດ ແລະມຸງປົກເຕັນຕາມພຣະຜູ້ເປັນເຈົ້າຊົງສັ່ງ. 20ໄດ້ເອົາແຜ່ນຫີນພຣະ-
ບັນຍັດໄວ້ໃນຫີບນັ້ນ ແລະສອດໄມ້ຄານຫາມໄວ້ ແລ້ວຕັ້ງພຣະທີ່ນັ່ງກະລຸນາໄວ້ເທິງຫີບ.
21ແລະໄດ້ເອົາຫີບພຣະບັນຍັດໄວ້ໃນຫໍເຕັນສັກສິດ ພ້ອມທັງກາງຜ້າກັ້ງບັງຫີບໄວ້ຕາມພຣະຜູ້-
ເປັນເຈົ້າຊົງສັ່ງ.

22ໂມເຊໄດ້ຕັ້ງໂຕະໄວ້ໃນຫໍເຕັນສັກສິດ ທາງທິດເໜືອຂອງຫໍເຕັນສັກສິດນອກຜ້າກັ້ງ.
23ແລ້ວຈັດເຂົ້າຈີ່ສຳລັບຖວາຍພຣະຜູ້ເປັນເຈົ້າໄວ້ເທິງໂຕະນັ້ນຕາມພຣະອົງຊົງສັ່ງ.

24ເພິ່ນໄດ້ຕັ້ງຫລັກຕະກຽງໄວ້ໃນຫໍເຕັນສັກສິດຄືຕັ້ງໄວ້ຕໍ່ໜ້າໂຕະຂ້າງເຕັນເບື້ອງໃຕ້. 25ແລ້ວ
ເອົາຕະກຽງໄວ້ເທິງຄັນຕະກຽງຊ້ອງພຣະພັກພຣະຜູ້ເປັນເຈົ້າຕາມທີ່ພຣະອົງຊົງສັ່ງ.

26ເພິ່ນໄດ້ຕັ້ງແທ່ນຄຳໄວ້ໃນຫໍເຕັນສັກສິດເບື້ອງໜ້າຜ້າກັ້ງ. 27ໄດ້ເຜົາເຄື່ອງຫອມເທິງແທ່ນ
ຕາມພຣະຜູ້ເປັນເຈົ້າຊົງສັ່ງ.

28-29ແລະໄດ້ກາງຜ້າກັ້ງໄວ້ທີ່ປະຕູເຂົ້າເຕັນ ໄດ້ຕັ້ງແທ່ນເຜົາເຄື່ອງບູຊາໄວ້ທີ່ປະຕູຫໍເຕັນສັກ-
ສິດ ແລະຖວາຍເຄື່ອງບູຊາ ແລະອາຫານເທິງແທ່ນນັ້ນຕາມທີ່ພຣະຜູ້ເປັນເຈົ້າຊົງສັ່ງ.

30ເພິ່ນໄດ້ຕັ້ງຂັນໄວ້ລະຫວ່າງເຕັນກັບແທ່ນບູຊາ ແລ້ວເອົານ້ຳໃສ່ຂັນໄວ້ສຳລັບຊຳລະລ້າງ.
31ໂມເຊກັບອາໂຣນ ແລະພວກລູກຊາຍຂອງອາໂຣນໄດ້ລ້າງມື ແລະຕີນທີ່ຂັນນັ້ນ. 32ເມື່ອພວກ
ເຂົາຈະເຂົ້າໄປໃນຫໍເຕັນສັກສິດ ຫລື ເຂົ້າໄປໃກ້ແທ່ນ ພວກເຂົາກໍຕ້ອງຊຳລະລ້າງເສຍກ່ອນ
ຕາມທີ່ພຣະຜູ້ເປັນເຈົ້າຊົງສັ່ງ.

33ໂມເຊໄດ້ເຮັດຮົ້ວອ້ອມຮອບເຕັນກັບແທ່ນນັ້ນ ແລະກາງຜ້າກັ້ງໄວ້ທີ່ປະຕູຮົ້ວ ແລ້ວເພິ່ນກໍ
ສຳເລັດການງານທັງປວງ.

## ເມກປົກຄຸມຫໍເຕັນສັກສິດ

34ເມກໄດ້ປົກຄຸມຫໍເຕັນສັກສິດ ແລະມີພຣະລັດສະໝີ ຄວາມຍິ່ງໃຫຍ່ຂອງພຣະຜູ້ເປັນເຈົ້າຢູ່
ໃນທີ່ນັ້ນ. 35ໂມເຊເຂົ້າໄປໃນຫໍເຕັນສັກສິດບໍ່ໄດ້ ເພາະວ່າມີເມກປົກຄຸມຢູ່ ແລະພຣະລັດສະໝີ
ຄວາມຍິ່ງໃຫຍ່ຂອງພຣະຜູ້ເປັນເຈົ້າກໍຢູ່ທີ່ນັ້ນ. 36ຊາວອິສຣາເອນອອກຈາກຄ້າຍນີ້ໄປຍັງຄ້າຍ
ອື່ນໄດ້ ກໍຕໍ່ເມື່ອເມກໄດ້ລອຍຂຶ້ນຈາກຫໍເຕັນສັກສິດແລ້ວເທົ່ານັ້ນ. 37ຖ້າເມກນັ້ນບໍ່ລອຍຂຶ້ນໄປ
ພວກເຂົາກໍບໍ່ອອກເດີນທາງໄປຍັງຄ້າຍອື່ນ ພວກເຂົາຈະຕ້ອງຖ້າຢູ່ຈົນເຖິງມື້ທີ່ເມກນັ້ນລອຍຂຶ້ນ.
38ເພາະຕະຫລອດການເດີນທາງໄປມານັ້ນ ໃນກາງເວັນເມກຂອງພຣະຜູ້ເປັນເຈົ້າຊົງສະຖິດຢູ່
ເທິງຫໍເຕັນສັກສິດ ແລະຕອນກາງຄືນໄດ້ມີໄຟໃນເມກນັ້ນ ຊາວອິສຣາເອນໄດ້ເຫັນເມກເມື່ອ
ພວກເຂົາຍົກຍ້າຍໄປ.

* * *

# ກິດລະບຽບການຂອງພວກເລວີ

## ບົດທີ 1

### ເຄື່ອງບູຊາດ້ວຍໄຟເປັນກິ່ນຫອມທີ່ພໍພຣະໄທພຣະຜູ້ເປັນເຈົ້າ

1ພຣະຜູ້ເປັນເຈົ້າ ໄດ້ເອີ້ນ ໂມເຊ ແລະກ່າວກັບທ່ານຈາກຫໍເຕັນ ແຫ່ງຊຸມນຸມວ່າ 2"ຈົ່ງເວົ້າກັບ
ລູກຫລານ ອິສຣາເອນ ແລະກ່າວແກ່ພວກເຂົາວ່າ ຫາກຄົນໜຶ່ງຄົນໃດໃນພວກທ່ານຈະເອົາເຄື່ອງ
ບູຊາມາຖວາຍ ແດ່ພຣະຜູ້ເປັນເຈົ້າ ໃຫ້ເອົາສັດລ້ຽງອັນເປັນເຄື່ອງບູຊາຂອງທ່ານມາຈາກຝູງງົວ
ຫລືຝູງແກະ ຝູງແບ້

3ຖ້າຜູ້ນັ້ນເອົາງົວຂອງລາວມາເປັນເຄື່ອງເຜົາບູຊາ ກໍໃຫ້ລາວເລືອກເອົາງົວເຖິກໂຕທີ່ດີທີ່ສຸດ
ໃຫ້ລາວເອົາ ເຄື່ອງບູຊານັ້ນມາຖວາຍທີ່ປະຕູຫໍເຕັນແຫ່ງຊຸມນຸມດ້ວຍຄວາມເຕັມໃຈຕໍ່ພຣະພັກ
ພຣະຜູ້ເປັນເຈົ້າ 4ແລະໃຫ້ຜູ້ນັ້ນເອົາມືວາງໄວ້ເທິງຫົວສັດ ຊຶ່ງເປັນເຄື່ອງເຜົາບູຊານັ້ນ ແລະ
ເຄື່ອງເຜົາບູຊານັ້ນຈະເປັນທີ່ພໍພຣະໄທເພື່ອເຮັດການລຶບລ້າງມົນທິນ (ໄຖ່ໂທດບາບ) ຂອງຜູ້ນັ້ນ
5ແລ້ວໃຫ້ພວກເຂົາຂ້າງົວເຖິກນັ້ນຕໍ່ພຣະພັກພຣະຜູ້ເປັນເຈົ້າ ແລ້ວພວກປະໂລຫິດ ຄືລູກຊາຍ
ຂອງອາໂຣນ ຈົ່ງເອົາເລືອດມາຖວາຍ ແລະຈົ່ງເອົາເລືອດມາຊິດໃສ່ເທິງແທ່ນບູຊາ ແລະຮອບ
ແທ່ນບູຊາ ຊຶ່ງຢູ່ທີ່ປະຕູຫໍເຕັນແຫ່ງຊຸມນຸມ 6ແລະໃຫ້ເຂົາລອກໜັງອອກ ເອົາເຄື່ອງເຜົາບູຊານັ້ນ
ອອກໄປ ແລ້ວຕັດໂຕສັດເປັນຕ່ອນໆ 7ແລະລູກຊາຍຂອງອາໂຣນຜູ້ເປັນປະໂລຫິດຈະດັງໄຟ
ເທິງແທ່ນບູຊາ ແລະເອົາຟືນມາວາງໄວ້ໃນໄຟນັ້ນ 8ແລະພວກປະໂລຫິດ ຄືລູກຊາຍຂອງອາ-
ໂຣນ ຈະວາງທ່ອນຫົວ ແລະໄຂມັນສັດຕາມລຳດັບໄວ້ເທິງຟືນໃນໄຟທີ່ຢູ່ເທິງແທ່ນບູຊາ 9ແຕ່
ໃຫ້ພວກເຂົາເອົານ້ຳລ້າງເຄື່ອງໃນ ແລະຂາສັດເສຍ ແລ້ວປະໂລຫິດຈຶ່ງເອົາທັງໝົດມາເຜົາເທິງ
ແທ່ນບູຊາເປັນເຄື່ອງເຜົາບູຊາ ຊຶ່ງເປັນເຄື່ອງບູຊາດ້ວຍໄຟ ເປັນກິ່ນຫອມທີ່ພໍພຣະໄທແດ່ພຣະ-
ຜູ້ເປັນເຈົ້າ

10ຖ້າຜູ້ນັ້ນເອົາສັດນ້ອຍມາຈາກຝູງແກະ ຫລືຝູງແບ້ມາຖວາຍເປັນເຄື່ອງເຜົາບູຊາ ໃຫ້ຜູ້ນັ້ນ
ເລືອກເອົາສັດໂຕຜູ້ທີ່ດີທີ່ສຸດມາຖວາຍ 11ໃຫ້ພວກເຂົາຂ້າສັດນັ້ນຢູ່ຂ້າງແທ່ນບູຊາທາງທິດເໜືອ
ຕໍ່ພຣະພັກພຣະຜູ້ເປັນເຈົ້າ ແລະພວກປະໂລຫິດ ຄືລູກຊາຍຂອງອາໂຣນ ຈະເອົາເລືອດສັດ
ນັ້ນມາຊິດໃສ່ເທິງແທ່ນ ແລະຮອບແທ່ນ 12ໃຫ້ພວກເຂົາປາດສັດນັ້ນເປັນຕ່ອນໆທັງຫົວ ແລະ
ໄຂມັນດ້ວຍ ແລະປະໂລຫິດຈະເອົາຕ່ອນນັ້ນມາວາງໄວ້ ເທິງຟືນໃນໄຟຢູ່ແທ່ນບູຊາ 13ແຕ່
ເຄື່ອງໃນກັບຂານັ້ນ ຜູ້ຖວາຍບູຊາຈະລ້າງເສຍດ້ວຍນ້ຳ ແລະໃຫ້ປະໂລຫິດເອົາເຄື່ອງທັງໝົດ
ເຫລົ່ານີ້ມາເຜົາບູຊານຳກັນເທິງແທ່ນບູຊາ ເປັນເຄື່ອງເຜົາບູຊາ ຄືເປັນເຄື່ອງບູຊາດ້ວຍໄຟ ເປັນ
ກິ່ນຫອມທີ່ພໍພຣະໄທພຣະຜູ້ເປັນເຈົ້າ

14ຖ້າຜູ້ໃດຈະເອົານົກມາຖວາຍເປັນເຄື່ອງເຜົາບູຊາແດ່ພຣະຜູ້ເປັນເຈົ້າ ກໍໃຫ້ຜູ້ນັ້ນເອົາຂອງ
ບູຊາທີ່ເປັນນົກເຂົາຫລືນົກກາງແກໜຸ່ມມາຖວາຍ 15ຈົ່ງໃຫ້ປະໂລຫິດເອົານົກນັ້ນມາທີ່ແທ່ນບູຊາ
ບິດຫົວແລ້ວເຜົາບູຊາເທິງແທ່ນບູຊາ ໃຫ້ເລືອດໄຫລອອກມາຂ້າງໆແທ່ນບູຊາ 16ໃຫ້ຈົກໝຽງ

ແລະຫລັກຂົນນົກນັ້ນເສຍ ຖິ້ມລົງຂ້າງແທ່ນບູຊາທາງທິດຕາເວັນອອກ ບ່ອນທີ່ຖິ້ມຂີ້ເທົ່າໄຟ
17ແລະໃຫ້ພວກເຂົາຈີກປີກບໍ່ໃຫ້ຂາດຈາກໂຕ ແລະປະໂລຫິດຈະເຜົານົກນັ້ນເທິງແທ່ນບູຊາ
ເປັນເຄື່ອງເຜົາບູຊາ ຄືເປັນເຄື່ອງບູຊາດ້ວຍໄຟ ເປັນກິ່ນຫອມທີ່ພໍພຣະໄທພຣະຜູ້ເປັນເຈົ້າ"

# ບົດທີ 2

## ເຄື່ອງຖວາຍພືດຜົນເປັນເມັດ

1"ເມື່ອຜູ້ໜຶ່ງຜູ້ໃດເອົາພືດຜົນເປັນເມັດມາເປັນເຄື່ອງບູຊາຖວາຍແດ່ພຣະຜູ້ເປັນເຈົ້າ ກໍໃຫ້ຜູ້
ນັ້ນເອົາຍອດແປ້ງມາຖວາຍ ໃຫ້ພວກເຂົາຖອກນ້ຳມັນລົງໃນແປ້ງ ແລະຈຶ່ງເອົາກຳຍານມາວາງ
ໄວ້ເທິງດ້ວຍ 2ແລ້ວເອົາມາໃຫ້ພວກປະໂລຫິດ ຄືລູກຊາຍຂອງອາໂຣນ ຜູ້ຖວາຍບູຊາຈະກຳ
ຍອດແປ້ງປົນນ້ຳມັນກຳມືໜຶ່ງກັບກຳຍານທັງໝົດ ແລະປະໂລຫິດຈະເຜົາເຄື່ອງບູຊາສ່ວນນີ້ເປັນ
ທີ່ລະນຶກເທິງແທ່ນບູຊາ ຄືບູຊາດ້ວຍໄຟ ເປັນກິ່ນຫອມທີ່ພໍພຣະໄທພຣະຜູ້ເປັນເຈົ້າ 3ສ່ວນພືດ
ຜົນເປັນເມັດທີ່ເຫລືອຢູ່ນັ້ນຈະເປັນຂອງອາໂຣນ ແລະລູກຊາຍຂອງລາວ ເປັນສິ່ງບໍລິສຸດທີ່ສຸດ
ຈາກເຄື່ອງບູຊາດ້ວຍໄຟຖວາຍແດ່ພຣະຜູ້ເປັນເຈົ້າ

4ເມື່ອເຈົ້າເອົາເຂົ້າຈີ່ຈາກເຕົາອົບມາຖວາຍເປັນເຄື່ອງບູຊາ ໃຫ້ເປັນເຂົ້າຈີ່ບໍ່ມີເຊື້ອແປ້ງເຮັດ
ດ້ວຍຍອດແປ້ງນວດດ້ວຍນ້ຳມັນ ຫລືເຂົ້າຈີ່ແຜ່ນບໍ່ມີເຊື້ອແປ້ງທາດ້ວຍນ້ຳມັນ 5ແລະຖ້າເຈົ້າເອົາ
ເຂົ້າຈີ່ປີ້ງເທິງແຜ່ນເຫລັກປີ້ງມາຖວາຍເປັນເຄື່ອງບູຊາກໍໃຫ້ເປັນເຂົ້າຈີ່ເຮັດດ້ວຍຍອດແປ້ງອັນ
ລະອຽດເປັນເຂົ້າຈີ່ບໍ່ມີເຊື້ອແປ້ງນວດດ້ວຍນ້ຳມັນ 6ເຈົ້າຈົ່ງຫັກເຂົ້າຈີ່ນັ້ນເປັນກ້ອນໆຈຶ່ງເອົານ້ຳ-
ມັນຖອກໃສ່ເທິງ ເປັນເຂົ້າຈີ່ຖວາຍບູຊາ 7ຖ້າເຄື່ອງບູຊາຂອງເຈົ້າເປັນເຂົ້າໜົມຈືນໃສ່ໝໍ້ຂາງ
ໃຫ້ເຮັດດ້ວຍຍອດແປ້ງລະອຽດກັບນ້ຳມັນ

8ເຈົ້າຈົ່ງເອົາເຂົ້າຈີ່ ຊຶ່ງເຮັດດ້ວຍສິ່ງເຫລົ່ານີ້ມາຖວາຍແດ່ພຣະຜູ້ເປັນເຈົ້າ ເມື່ອເອົາມາໃຫ້
ປະໂລຫິດແລ້ວປະໂລຫິດຈະເອົາມາເຖິງແທ່ນບູຊາ 9ແລະປະໂລຫິດຈະເອົາເຂົ້າຈີ່ສ່ວນໜຶ່ງທີ່ໄດ້
ຖວາຍແດ່ພຣະຜູ້ເປັນເຈົ້າ ແລະເຜົາເທິງແທ່ນບູຊາ ເປັນເຄື່ອງບູຊາດ້ວຍໄຟ ເປັນກິ່ນຫອມທີ່
ພໍພຣະໄທແດ່ພຣະຜູ້ເປັນເຈົ້າ 10ສ່ວນເຄື່ອງຖວາຍທີ່ເຫລືອຢູ່ນັ້ນຕົກເປັນຂອງອາໂຣນ ແລະ
ຂອງລູກຊາຍຂອງລາວ ເປັນສ່ວນທີ່ບໍລິສຸດທີ່ສຸດຈາກເຄື່ອງບູຊາດ້ວຍໄຟຖວາຍແດ່ພຣະຜູ້-
ເປັນເຈົ້າ

11ບັນດາພືດຜົນເປັນເມັດໃດໆຊຶ່ງເອົາມາຖວາຍແດ່ພຣະຜູ້ເປັນເຈົ້ານັ້ນ ຢ່າໃຫ້ມີເຊື້ອແປ້ງ
ເພາະວ່າທັງເຊື້ອແປ້ງ ຫລືນ້ຳເຜິ້ງຢ່າເອົາມາເຜົາເປັນເຄື່ອງບູຊາດ້ວຍໄຟຖວາຍແດ່ພຣະຜູ້ເປັນ-
ເຈົ້າ 12ຖ້າເຈົ້າຈະເອົາສິ່ງທັງສອງນີ້ຄືຜົນລະປູກລຸ້ນທຳອິດມາຖວາຍແດ່ພຣະຜູ້ເປັນເຈົ້າກໍໄດ້
ແຕ່ຢ່າເຜົາຖວາຍເທິງແທ່ນບູຊາໃຫ້ເປັນກິ່ນຫອມທີ່ພໍພຣະໄທ 13ແລະໃນເຄື່ອງເຂົ້າໜົມທຸກຢ່າງ
ເຈົ້າຈົ່ງໃສ່ເກືອ ເຈົ້າຢ່າໃຫ້ເກືອແຫ່ງຄຳໝັ້ນສັນຍາກັບພຣະເຈົ້າ ຂອງເຈົ້າຂາດເສຍຈາກເຂົ້າ-
ໜົມຂອງເຈົ້າ ເຈົ້າຈົ່ງຖວາຍເກືອພ້ອມກັບບັນດາເຄື່ອງບູຊາທຸກໆຊະນິດຂອງເຈົ້າ

14ຖ້າເຈົ້າຖວາຍພືດຜົນເປັນເມັດຄືຜົນລະປູກລຸ້ນທຳອິດແດ່ພຣະຜູ້ເປັນເຈົ້າ ເຈົ້າຈົ່ງເອົາຮວງ
ເຂົ້າໃໝ່ໆຂາງໄຟ ໃຫ້ແຫ້ງ ບົດເມັດໃຫ້ລະອຽດກ່ອນຈຶ່ງເອົາມາຖວາຍ 15ເຈົ້າຈົ່ງເອົານ້ຳມັນ

ຖອກໃສ່ ແລະວາງເຄື່ອງກຳຍານໄວ້ເທິງນັ້ນ ເປັນເຄື່ອງຖວາຍ 16ປະໂລຫິດຈະເອົາສ່ວນໜຶ່ງ
ຂອງເມັດທີ່ບົດ ນໍ້າມັນ ແລະເຄື່ອງກຳຍານເຜົາຖວາຍເປັນສ່ວນທີ່ລະນຶກ ເປັນເຄື່ອງບູຊາດ້ວຍ
ໄຟຖວາຍແດ່ພຣະຜູ້ເປັນເຈົ້າ”

# ບົດທີ 3

## ເຄື່ອງຖວາຍເພື່ອຄວາມສາມັກຄີທຳ

1“ຖ້າຜູ້ໜຶ່ງຜູ້ໃດຖວາຍເຄື່ອງບູຊາເພື່ອຄວາມສາມັກຄີທຳ ຖ້າລາວຖວາຍງົວຜູ້ ຫລືງົວແມ່
ຈາກຝູງ ໃຫ້ລາວເລືອກເອົາສັດໂຕທີ່ດີທີ່ສຸດມາຖວາຍຕໍ່ພຣະພັກພຣະຜູ້ເປັນເຈົ້າ 2ໃຫ້ລາວເອົາ
ມືວາງໄວ້ເທິງຫົວຂອງສັດໂຕທີ່ຈະຖວາຍນັ້ນ ແລະຈຶ່ງຂ້າຕໍ່ໜ້າປະຕູຫໍເຕັນແຫ່ງຊຸມນຸມ ພວກ
ປະໂລຫິດ ຄືລູກຊາຍຂອງອາໂຣນ ຈະເອົາເລືອດມາຊິດໃສ່ເທິງແທ່ນບູຊາໃຫ້ທົ່ວ 3ຈາກເຄື່ອງ
ບູຊາທີ່ຖວາຍເພື່ອຄວາມສາມັກຄີທຳ ເປັນເຄື່ອງບູຊາດ້ວຍໄຟຖວາຍແດ່ພຣະຜູ້ເປັນເຈົ້າ ຜູ້
ຖວາຍຈະເອົາໄຂມັນທີ່ຕິດກັບເຄື່ອງໃນ ແລະໄຂມັນທີ່ຢູ່ໃນເຄື່ອງໃນທັງໝົດ 4ແລະໝາກໄຂ່-
ຫລັງທັງສອງໜ່ວຍກັບໄຂມັນທີ່ຕິດຢູ່ບັ້ນແອວນັ້ນ ແລະໃຫ້ເອົາໜັງບາງໆທີ່ຕິດຢູ່ເທິງຕັບອອກ
ພ້ອມກັບໝາກໄຂ່ຫລັງ 5ລູກຊາຍອາໂຣນຈະເອົາສິ່ງທັງຫລາຍນີ້ມາເຜົາເທິງແທ່ນບູຊາ ເປັນ
ເຄື່ອງບູຊາດ້ວຍໄຟ ເປັນກິ່ນຫອມທີ່ພໍພຣະໄທແດ່ພຣະຜູ້ເປັນເຈົ້າ

6ຖ້າຜູ້ໃດເອົາເຄື່ອງບູຊາເພື່ອຄວາມສາມັກຄີທຳມາຖວາຍແດ່ພຣະຜູ້ເປັນເຈົ້າເປັນສັດໂຕຜູ້
ຫລືໂຕແມ່ທີ່ໄດ້ມາຈາກຝູງແບ້ ແກະ ໃຫ້ເລືອກເອົາໂຕທີ່ດີທີ່ສຸດ 7ຖ້າລາວຈະຖວາຍລູກແກະ
ເປັນເຄື່ອງບູຊາ ກໍໃຫ້ລາວເອົາມາຖວາຍຕໍ່ພຣະພັກພຣະຜູ້ເປັນເຈົ້າ 8ໃຫ້ລາວເອົາມືວາງໄວ້ເທິງ
ຫົວຂອງສັດທີ່ຈະຖວາຍນັ້ນແລະໃຫ້ຂ້າຕໍ່ໜ້າຫໍເຕັນແຫ່ງຊຸມນຸມ ແລະລູກຊາຍອາໂຣນຈະເອົາ
ເລືອດມາຊິດໃສ່ເທິງແທ່ນບູຊາແລະໃຫ້ທົ່ວແທ່ນບູຊາ 9ຈາກເຄື່ອງບູຊາທີ່ຖວາຍເພື່ອຄວາມສາ-
ມັກຄີທຳ ຄືບູຊາດ້ວຍໄຟຖວາຍແດ່ພຣະຜູ້ເປັນເຈົ້າ ໃຫ້ພວກເຂົາຖວາຍໄຂມັນ ກັບຫາງທີ່ເປັນ
ໄຂມັນທັງໝົດ ຕັດອອກກະດູກສັນຫລັງ ແລະໄຂມັນທີ່ຫຸ້ມເຄື່ອງໃນ ກັບໄຂມັນທີ່ຢູ່ໃນເຄື່ອງໃນ
ທັງໝົດ 10ແລະໝາກໄຂ່ຫລັງທັງສອງໜ່ວຍກັບໄຂມັນທີ່ຕິດຢູ່ບັ້ນແອວນັ້ນ ໃຫ້ເອົາໜັງບາງໆທີ່
ຕິດຢູ່ເທິງຕັບນັ້ນອອກພ້ອມກັບໝາກໄຂ່ຫລັງ 11ແລະປະໂລຫິດຈະເອົາສິ່ງເຫລົ່ານີ້ມາເຜົາເທິງ
ແທ່ນບູຊາ ເປັນອາຫານເຜົາດ້ວຍໄຟຖວາຍແດ່ພຣະຜູ້ເປັນເຈົ້າ

12ຖ້າເຄື່ອງບູຊາຂອງລາວເປັນແບ້ກໍໃຫ້ລາວເອົາມາຖວາຍຕໍ່ພຣະພັກພຣະຜູ້ເປັນເຈົ້າ 13ໃຫ້
ລາວເອົາມືວາງໄວ້ເທິງຫົວຂອງມັນ ແລະຂ້າມັນຕໍ່ໜ້າຫໍເຕັນແຫ່ງຊຸມນຸມ ແລະລູກຊາຍຂອງ
ອາໂຣນຈະເອົາເລືອດມາຊິດໃສ່ເທິງແທ່ນບູຊາແລະຮອບແທ່ນບູຊາ 14ແລ້ວໃຫ້ພວກເຂົາເອົາສິ່ງ
ເຫລົ່ານີ້ຈາກແບ້ໂຕນັ້ນເປັນເຄື່ອງບູຊາ ເປັນເຄື່ອງບູຊາດ້ວຍໄຟຖວາຍແດ່ພຣະຜູ້ເປັນເຈົ້າ ຄື
ໄຂມັນທີ່ຫຸ້ມເຄື່ອງໃນ ແລະໄຂມັນທີ່ຢູ່ໃນເຄື່ອງໃນ 15ແລະໝາກໄຂ່ຫລັງທັງສອງໜ່ວຍກັບໄຂ-
ມັນທີ່ຕິດຢູ່ບັ້ນແອວນັ້ນ ແລະໃຫ້ເອົາໜັງບາງໆທີ່ຕິດຢູ່ເທິງຕັບນັ້ນອອກພ້ອມກັບໝາກໄຂ່ຫລັງ
16ແລະປະໂລຫິດຈະເຜົາສິ່ງເຫລົ່ານີ້ເທິງແທ່ນບູຊາເປັນອາຫານທີ່ເຜົາດ້ວຍໄຟ ເປັນກິ່ນຫອມ
ເປັນທີ່ພໍພຣະໄທ ໄຂມັນທັງໝົດເປັນຂອງພຣະຜູ້ເປັນເຈົ້າ 17ໃຫ້ເປັນກົດເກນຖາວອນປະຈຳ

ຕະຫລອດຊົ່ວອາຍຸຂອງເຈົ້າໃນບ່ອນທີ່ເຈົ້າອາໄສຢູ່ຄື ເຈົ້າຢ່າກິນໄຂມັນ ຫລືເລືອດ”

# ບົດທີ 4

## ເຄື່ອງບູຊາໄຖ່ບາບ

1ພຣະຜູ້ເປັນເຈົ້າ ໄດ້ກ່າວກັບ ໂມເຊ ວ່າ 2“ຈົ່ງກ່າວ ແກ່ຄົນ ອິສຣາເອນ ວ່າ ຖ້າຜູ້ໜຶ່ງຜູ້ໃດໄດ້
ເຮັດຜິດບາບຕໍ່ສູ້ຄຳສັ່ງຂອງ ພຣະຜູ້ເປັນເຈົ້າ ໃນສິ່ງທີ່ບໍ່ໃຫ້ເຮັດ ໂດຍບໍ່ໄດ້ເຈດຕະນາເຮັດສິ່ງ
ເຫລົ່ານັ້ນປະການໜຶ່ງປະການໃດ
3ຖ້າປະໂລຫິດທີ່ໄດ້ຮັບຄວາມຜິດໄວ້ເປັນຜູ້ເຮັດບາບ ເປັນເຫດໃຫ້ໄພ່ພົນຫລົງເຮັດບາບ ເຫດ
ດ້ວຍບາບທີ່ລາວໄດ້ເຮັດນັ້ນ ກໍໃຫ້ລາວເອົາງົວໜຸ່ມໂຕດີທີ່ສຸດມາຖວາຍແດ່ພຣະຜູ້ເປັນເຈົ້າ ເປັນ
ເຄື່ອງບູຊາໄຖ່ບາບ 4ໃຫ້ລາວເອົາງົວນັ້ນມາໃກ້ປະຕູຫໍເຕັນ ແຫ່ງຊຸມນຸມຕໍ່ພຣະພັກ ພຣະຜູ້ເປັນ-
ເຈົ້າ ແລະໃຫ້ລາວເອົາມືວາງໄວ້ເທິງຫົວງົວ ໂຕນັ້ນ ແລະໃຫ້ຂ້າມັນຕໍ່ພຣະພັກ ພຣະຜູ້ເປັນເຈົ້າ
5ແລະປະໂລຫິດຜູ້ໄດ້ຮັບຄວາມຜິດແລ້ວຈະເອົາເລືອດງົວສ່ວນໜຶ່ງມາທີ່ຫໍເຕັນແຫ່ງຊຸມນຸມ 6ປະ-
ໂລຫິດຈະເອົານິ້ວມືຈຸ່ມລົງໃນເລືອດ ແລະຊິດເລືອດນັ້ນຕໍ່ໜ້າຜ້າກັ້ງຫ້ອງບໍລິສຸດເຈັດເທື່ອຕໍ່
ພຣະພັກ ພຣະຜູ້ເປັນເຈົ້າ 7ແລະປະໂລຫິດຈະເອົາເລືອດຊິດໃສ່ຈອມຂອງແທ່ນເຜົາເຄື່ອງຫອມ
ຊຶ່ງຢູ່ໃນຫໍເຕັນແຫ່ງຊຸມນຸມ ຕໍ່ພຣະພັກ ພຣະຜູ້ເປັນເຈົ້າ ສ່ວນເລືອດງົວທີ່ເຫລືອຢູ່ນັ້ນລາວຈະ
ຖອກລົງໃສ່ຕີນແທ່ນເຄື່ອງເຜົາບູຊາຊຶ່ງຢູ່ທີ່ປະຕູຫໍເຕັນແຫ່ງຊຸມນຸມ
8ແລະລາວຈະເອົາໄຂມັນທັງໝົດອອກຈາກງົວໂຕທີ່ເປັນເຄື່ອງບູຊາໄຖ່ບາບ ຄືໄຂມັນທີ່ຫຸ້ມ
ເຄື່ອງໃນ ແລະໄຂມັນທີ່ຕິດຢູ່ກັບເຄື່ອງໃນທັງໝົດ 9ແລະໝາກໄຂ່ຫລັງທັງສອງໜ່ວຍກັບໄຂມັນ
ທີ່ຕິດຢູ່ບັ້ນແອວນັ້ນ ແລະໃຫ້ເອົາໜັງບາງໆທີ່ຕິດຢູ່ເທິງຕັບນັ້ນອອກ ພ້ອມກັບໝາກໄຂ່ຫລັງ
10ໃຫ້ເອົາອອກເຊັ່ນດຽວກັບເອົາອອກຈາກງົວທີ່ຖວາຍເພື່ອຄວາມສາມັກຄີທຳ ແລະປະໂລຫິດຈະ
ເຜົາສິ່ງເຫລົ່ານີ້ເທິງແທ່ນເຄື່ອງເຜົາບູຊາ 11ແຕ່ໜັງຂອງງົວພ້ອມກັບຊີ້ນງົວທັງໝົດ ຫົວ ຂາ
ເຄື່ອງໃນ ແລະອາຈົມຂອງມັນ 12ໃຫ້ເອົາອອກໄປພາຍນອກຄ້າຍໃນບ່ອນສະອາດຄືບ່ອນທີ່
ພວກເຂົາຖິ້ມຂີ້ເທົ່າໄຟ ແລະໃຫ້ສຸມໄຟເຜົາ ໃນບ່ອນຖິ້ມຂີ້ເທົ່າໄຟຢູ່ບ່ອນໃດກໍໃຫ້ເຜົາບ່ອນນັ້ນ
13ຖ້າຊຸມນຸມຊົນອິສຣາເອນທັງໝົດເຮັດຜິດໂດຍບໍ່ຮູ້ຕົວ ແລະຄວາມຜິດນັ້ນຍັງບໍ່ປາກົດແຈ້ງ
ແກ່ທີ່ປະຊຸມ ຖ້າພວກເຂົາໄດ້ເຮັດສິ່ງໜຶ່ງສິ່ງໃດ ຊຶ່ງພຣະຜູ້ເປັນເຈົ້າບັນຊາບໍ່ໃຫ້ເຮັດ ພວກເຂົາ
ກໍມີຄວາມຜິດ 14ເມື່ອຄວາມຜິດທີ່ພວກເຂົາໄດ້ເຮັດນັ້ນເປັນທີ່ປະກົດຂຶ້ນ ໃຫ້ທີ່ປະຊຸມຖວາຍງົວ
ໜຸ່ມໂຕໜຶ່ງເປັນເຄື່ອງບູຊາໄຖ່ບາບ ໃຫ້ເອົາງົວນັ້ນມາຕໍ່ໜ້າຫໍເຕັນແຫ່ງຊຸມນຸມ 15ແລະພວກເຖົ້າ
ແກ່ທັງໝົດຂອງຊຸມນຸມຊົນ ຈະເອົາມືວາງໄວ້ເທິງຫົວຂອງງົວນັ້ນຕໍ່ພຣະພັກ ພຣະຜູ້ເປັນເຈົ້າ
ແລະໃຫ້ຂ້າງົວໂຕນັ້ນຕໍ່ພຣະພັກ ພຣະຜູ້ເປັນເຈົ້າ 16ແລ້ວປະໂລຫິດຜູ້ຮັບຄວາມຜິດຈະເອົາເລືອດ
ຂອງງົວສ່ວນໜຶ່ງເຂົ້າໄປໃນຫໍເຕັນແຫ່ງຊຸມນຸມ 17ແລະປະໂລຫິດຈະເອົານິ້ວມືຈຸ່ມລົງໃນເລືອດ
ແລະຊິດໃສ່ຕໍ່ໜ້າຜ້າກັ້ງເຈັດເທື່ອຕໍ່ພຣະພັກ ພຣະຜູ້ເປັນເຈົ້າ 18ແລະປະໂລຫິດຈະເອົາເລືອດມາ
ໃສ່ເທິງຈອມທັງຫລາຍຂອງແທ່ນບູຊາຊຶ່ງຢູ່ໃນຫໍເຕັນແຫ່ງຊຸມນຸມຕໍ່ພຣະພັກ ພຣະຜູ້ເປັນເຈົ້າ
ສ່ວນເລືອດທີ່ເຫລືອຢູ່ນັ້ນ ລາວຈະຖອກລົງທີ່ຕີນແທ່ນເຄື່ອງເຜົາບູຊາ ຊຶ່ງຢູ່ທີ່ປະຕູຫໍເຕັນແຫ່ງ

ຊຸມນຸມ
19ແລະລາວຈະເອົາໄຂມັນທັງໝົດອອກໄປ ເອົາໄປເຜົາເທິງແທ່ນ 20ລາວໄດ້ເຮັດກັບງົວໂຕທີ່
ຖວາຍເປັນເຄື່ອງບູຊາໄຖ່ບາບຢ່າງໃດ ກໍໃຫ້ລາວເຮັດກັບງົວໂຕນີ້ຢ່າງດຽວກັນ ແລະປະໂລຫິດ
ຈະເຮັດການໄຖ່ບາບຂອງຊຸມນຸມຊົນແລ້ວພວກເຂົາທັງຫລາຍຈະໄດ້ຮັບການອະໄພບາບ 21ໃຫ້
ພວກເຂົາເອົາງົວອອກໄປນອກຄ້າຍ ແລະເຜົາຄືກັບເຜົາງົວໂຕກ່ອນ ເປັນເຄື່ອງບູຊາໄຖ່ບາບ
ຂອງທີ່ປະຊຸມ
22ຖ້າຜູ້ປົກຄອງເຮັດບາບ ແລະຫລົງຜິດເຮັດສິ່ງຊຶ່ງ **ພຣະຜູ້ເປັນເຈົ້າ** ພຣະເຈົ້າຂອງລາວໄດ້
ບັນຊາບໍ່ໃຫ້ເຮັດໂດຍບໍ່ຮູ້ຕົວ ລາວກໍມີຄວາມຜິດ 23ເມື່ອລາວຮູ້ຕົວວ່າເຮັດຜິດດັ່ງນັ້ນແລ້ວ ກໍໃຫ້
ລາວເອົາລູກແບ້ໂຕຜູ້ທີ່ດີທີ່ສຸດມາເປັນເຄື່ອງບູຊາ 24ໃຫ້ລາວເອົາມືວາງໄວ້ເທິງຫົວແບ້ ແລະໃຫ້
ຂ້າແບ້ໃນບ່ອນທີ່ພວກເຂົາຂ້າສັດເປັນເຄື່ອງເຜົາບູຊາຕໍ່ພຣະພັກ **ພຣະຜູ້ເປັນເຈົ້າ** ນີ້ເປັນເຄື່ອງ
ບູຊາໄຖ່ບາບ 25ປະໂລຫິດຈະເອົານິ້ວຈຸ່ມເລືອດຂອງເຄື່ອງບູຊາໄຖ່ບາບແລ້ວເອົາໄປເຈີມຈອມ
ທັງຫລາຍຂອງແທ່ນເຄື່ອງເຜົາບູຊາ ແລະຖອກເລືອດທີ່ເຫລືອຢູ່ນັ້ນໃສ່ຕີນຂອງແທ່ນເຄື່ອງເຜົາ
ບູຊາ 26ແລະພວກເຂົາຈະເຜົາໄຂມັນທັງໝົດເທິງແທ່ນບູຊາແບບດຽວກັບເຜົາໄຂມັນເຄື່ອງເຜົາ
ເພື່ອຄວາມສາມັກຄີທຳ ແລະປະໂລຫິດຈະເຮັດການໄຖ່ໂທດບາບແທນຜູ້ເຮັດຜິດນັ້ນ ແລະລາວ
ຈະໄດ້ຮັບການອະໄພບາບ
27ຖ້າຄົນໜຶ່ງຄົນໃດຄືປະຊາຊົນເຮັດຄວາມຜິດໂດຍບໍ່ໄດ້ເຈດຕະນາຄືເຮັດສິ່ງໜຶ່ງສິ່ງໃດ ຊຶ່ງ
**ພຣະຜູ້ເປັນເຈົ້າ** ໄດ້ບັນຊາ ບໍ່ໃຫ້ລາວເຮັດ ລາວກໍມີຄວາມຜິດ 28ເມື່ອລາວຮູ້ຕົວວ່າເຮັດຜິດດັ່ງ-
ນັ້ນແລ້ວ ກໍໃຫ້ລາວເອົາລູກແບ້ໂຕແມ່ໂຕໜຶ່ງທີ່ດີທີ່ສຸດມາເປັນເຄື່ອງບູຊາໄຖ່ບາບທີ່ລາວໄດ້ເຮັດ
ໄປນັ້ນ 29ແລະລາວຈະເອົາມືວາງໄວ້ເທິງຫົວຂອງເຄື່ອງບູຊາໄຖ່ບາບ ແລະຂ້າເຄື່ອງບູຊາໄຖ່
ບາບນັ້ນໃນບ່ອນທີ່ພວກເຂົາຖວາຍເຄື່ອງເຜົາບູຊາ 30ປະໂລຫິດຈະເອົານິ້ວມືຈຸ່ມເລືອດແບ້ນັ້ນໄປ
ເຈີມຈອມແທ່ນເຄື່ອງເຜົາບູຊາ ແລະຖອກເລືອດສ່ວນທີ່ເຫລືອລົງໃສ່ຕີນຂອງແທ່ນບູຊານັ້ນ
31ແລະລາວຈະເອົາໄຂມັນອອກໃຫ້ໝົດຄືທີ່ໄດ້ເອົາໄຂມັນອອກຈາກເຄື່ອງບູຊາເພື່ອຄວາມສາ-
ມັກຄີທຳ ແລະປະໂລຫິດຈະເຜົາໄຂມັນນັ້ນເທິງແທ່ນບູຊາ ເປັນກິ່ນຫອມທີ່ພໍພຣະໄທແດ່ພຣະ-
**ຜູ້ເປັນເຈົ້າ** ແລະປະໂລຫິດຈະເຮັດການໄຖ່ໂທດຂອງລາວ ແລະລາວຈະໄດ້ຮັບການອະໄພ
32ຖ້າລາວເອົາລູກແກະມາເປັນເຄື່ອງບູຊາໄຖ່ບາບກໍໃຫ້ລາວເອົາລູກແກະໂຕແມ່ທີ່ດີທີ່ສຸດມາ
ຖວາຍ 33ລາວຈະເອົາມືວາງໄວ້ເທິງຫົວຂອງເຄື່ອງບູຊາໄຖ່ບາບແລະຂ້າເປັນເຄື່ອງບູຊາໄຖ່ບາບ
ໃນບ່ອນທີ່ພວກເຂົາຂ້າເຄື່ອງເຜົາບູຊາດ້ວຍໄຟ 34ແລະປະໂລຫິດຈະເອົານິ້ວມືຈຸ່ມເລືອດເຄື່ອງ
ບູຊາໄຖ່ບາບນັ້ນ ເອົາໄປເຈີມຈອມຂອງແທ່ນເຄື່ອງເຜົາບູຊາ ແລະຖອກເລືອດທີ່ເຫລືອລົງໃສ່
ຕີນຂອງແທ່ນບູຊາ 35ໃຫ້ລາວເອົາໄຂມັນທັງໝົດອອກໄປຄືທີ່ໄດ້ເອົາໄຂມັນຂອງລູກແກະອອກ
ຈາກເຄື່ອງບູຊາເພື່ອຄວາມສາມັກຄີທຳ ແລະ ປະໂລຫິດຈະເຜົາໄຂມັນເທິງແທ່ນບູຊາຄືກັບ
ເຄື່ອງບູຊາດ້ວຍໄຟຖວາຍແດ່ **ພຣະຜູ້ເປັນເຈົ້າ** ແລະປະໂລຫິດຈະເຮັດການໄຖ່ໂທດຂອງລາວ
ຊຶ່ງລາວໄດ້ເຮັດຜິດ ແລ້ວລາວກໍຈະໄດ້ຮັບການອະໄພ”

# ບົດທີ 5

## ເຄື່ອງບູຊາໄຖ່ການລະເມີດ

[1]"ຖ້າຜູ້ໃດເຮັດຄວາມຜິດບາບຍ້ອນໄດ້ຍິນສຽງຄຳສາບານ ແລະເປັນພະຍານ ຈຶ່ງປິດບັງສິ່ງ
ເຫລົ່ານັ້ນທີ່ຕົນໄດ້ເຫັນ ຫລືຮູ້ຈັກ ແລະເຖິງວ່າລາວຈະເປັນພະຍານໂດຍທີ່ລາວເຫັນ ຫລືຮູ້
ເລື່ອງກໍຕາມ ແຕ່ລາວບໍ່ຍອມໃຫ້ການເປັນພະຍານ ລາວຕ້ອງຮັບໂທດຕາມຄວາມຊົ່ວຊ້າຂອງ
ລາວ [2]ຫລືຜູ້ໜຶ່ງຜູ້ໃດແຕະຕ້ອງສິ່ງທີ່ເປັນມົນທິນ ຈະເປັນຊາກສັດປ່າທີ່ເປັນມົນທິນ ຫລືຊາກ
ສັດລ້ຽງທີ່ເປັນມົນທິນ ຫລືຊາກສັດເລືອຄານທີ່ເປັນມົນທິນ ໂດຍບໍ່ທັນຮູ້ຕົວ ລາວຈຶ່ງເປັນຄົນມົ
ມົນທິນ ລາວກໍມີຄວາມຜິດ [3]ຫລືຖ້າລາວແຕະຕ້ອງສິ່ງອັນເປັນມົນທິນຂອງຄົນຈະເປັນສິ່ງໃດໆ
ກໍຕາມ ຊຶ່ງເປັນມົນທິນ ອັນເປັນສິ່ງທີ່ເຮັດໃຫ້ຄົນນັ້ນເປັນມົນທິນ ໂດຍລາວບໍ່ຮູ້ຕົວ ເມື່ອລາວຮູ້
ແລ້ວ ລາວກໍມີຄວາມຜິດ [4]ຫລືຖ້າຄົນໜຶ່ງຄົນໃດໄດ້ກ່າວຄຳສາບານໂລໆເລໆວ່າຈະເຮັດຊົ່ວ
ຫລືດີ ໄດ້ກ່າວຄຳສາບານໃດໆກໍຕາມ ແລະລາວເຮັດໂດຍບໍ່ທັນຮູ້ຕົວ ເມື່ອລາວຮູ້ສຶກແລ້ວ
ລາວກໍມີຄວາມຜິດ [5]ເມື່ອຜູ້ໜຶ່ງຜູ້ໃດເຮັດຄວາມຜິດໃດໆທີ່ກ່າວມານີ້ ກໍໃຫ້ລາວສາລະພາບ
ຄວາມຜິດທີ່ລາວໄດ້ເຮັດ [6]ແລະໃຫ້ລາວເອົາເຄື່ອງບູຊາໄຖ່ຄວາມຜິດບາບມາຖວາຍແດ່ພຣະຜູ້-
ເປັນເຈົ້າ ເພາະບາບຊຶ່ງລາວໄດ້ເຮັດນັ້ນ ເຄື່ອງບູຊາຈະເປັນສັດໂຕແມ່ຈາກຝູງ ຄືລູກແກະ ຫລື
ລູກແບ້ ກໍເປັນເຄື່ອງບູຊາໄຖ່ບາບໄດ້ ແລະປະໂລຫິດຈະເຮັດການໄຖ່ບາບແທນຜູ້ທີ່ເຮັດຜິດນັ້ນ

[7]ຖ້າລາວບໍ່ສາມາດຖວາຍລູກແກະໂຕໜຶ່ງ ກໍໃຫ້ລາວເອົານົກເຂົາສອງໂຕ ຫລືນົກກາງແກ
ໜຸ່ມສອງໂຕ ມາເປັນເຄື່ອງຖວາຍພຣະຜູ້ເປັນເຈົ້າ ໄຖ່ຄວາມຜິດບາບທີ່ຕົນໄດ້ເຮັດ ນົກໂຕໜຶ່ງ
ເປັນເຄື່ອງບູຊາໄຖ່ບາບ ແລະນົກອີກໂຕໜຶ່ງເປັນເຄື່ອງເຜົາບູຊາດ້ວຍໄຟ [8]ໃຫ້ລາວເອົານົກທັງ
ສອງໂຕມາໃຫ້ປະໂລຫິດ ປະໂລຫິດຈະຖວາຍນົກໂຕໜຶ່ງເປັນເຄື່ອງບູຊາໄຖ່ບາບກ່ອນ ໃຫ້ລາວ
ບິດຫົວນົກຫລຸດອອກຈາກຄໍແຕ່ຢ່າໃຫ້ຂາດ. [9]ແລະປະໂລຫິດຈະເອົາເລືອດຂອງເຄື່ອງບູຊາໄຖ່
ບາບມາຊິດໃສ່ຂ້າງແທ່ນບູຊາ ສ່ວນເລືອດທີ່ເຫລືອຢູ່ນັ້ນ ໃຫ້ໄຫລອອກຈາກພື້ນແທ່ນ ນີ້ແມ່ນ
ເຄື່ອງບູຊາໄຖ່ບາບ [10]ແລ້ວລາວຈະຖວາຍນົກໂຕທີສອງເປັນເຄື່ອງເຜົາບູຊາຕາມກົດໝາຍ ແລະ
ປະໂລຫິດຈະເຮັດການໄຖ່ໂທດທີ່ລາວໄດ້ເຮັດໄປ ແລະລາວຈະໄດ້ຮັບການອະໄພໂທດ

[11]ແຕ່ຖ້າລາວບໍ່ສາມາດທີ່ຈະເອົານົກເຂົາສອງໂຕ ຫລືນົກກາງແກໜຸ່ມສອງໂຕມາ ກໍໃຫ້ລາວ
ເອົາເຄື່ອງບູຊາໄຖ່ບາບ ຊຶ່ງລາວໄດ້ເຮັດນັ້ນມາ ຄືຍອດແປ້ງໜຶ່ງໃນສິບເອຟາເອົາມາເປັນເຄື່ອງ
ບູຊາໄຖ່ບາບ ຢ່າໃສ່ນ້ຳມັນ ຫລືໃສ່ເຄື່ອງກຳຍານໃນແປ້ງ ເພາະເປັນເຄື່ອງບູຊາໄຖ່ບາບ [12]ໃຫ້
ລາວເອົາແປ້ງເຂົ້າມາໃຫ້ປະໂລຫິດ ແລະປະໂລຫິດຈະເອົາແປ້ງເຂົ້າກຳມືໜຶ່ງເປັນສ່ວນທີ່ລະນຶກ
ແລະເຜົາ ເທິງແທ່ນບູຊາຄືກັບເຄື່ອງເຜົາບູຊາດ້ວຍໄຟຖວາຍແດ່ພຣະຜູ້ເປັນເຈົ້າ ເປັນເຄື່ອງບູ-
ຊາໄຖ່ບາບ [13]ແລະປະໂລຫິດຈະເຮັດການໄຖ່ບາບຂອງລາວເພາະບາບທີ່ລາວໄດ້ເຮັດໃນເລື່ອງ
ໃດເລື່ອງໜຶ່ງທີ່ກ່າວມານີ້ ແລະລາວຈະໄດ້ຮັບການອະໄພ ແລະສ່ວນທີ່ເຫລືອນັ້ນຈະເປັນຂອງ
ປະໂລຫິດ ເຊັ່ນດຽວກັບເຄື່ອງຖວາຍເພື່ອຄວາມສາມັກຄີທຳ"

[14]ພຣະຜູ້ເປັນເຈົ້າກ່າວກັບໂມເຊວ່າ: [15]"ຖ້າຜູ້ໃດເຮັດການບໍ່ສັດຊື່ ແລະເຮັດບາບໂດຍບໍ່ຮູ້
ຕົວໃນເລື່ອງຂອງຄວາມບໍລິສຸດແຫ່ງພຣະຜູ້ເປັນເຈົ້າ ໃຫ້ຜູ້ນັ້ນເອົາແກະໂຕຜູ້ທີ່ດີທີ່ສຸດຈາກຝູງ

ເປັນເຄື່ອງບູຊາໄຖ່ຄວາມຜິດບາບຖວາຍແດ່ພຣະຜູ້ເປັນເຈົ້າ ໃຫ້ເຈົ້າຕີລາຄາເປັນເງິນເຊເຂຕາມ
ເຊເຂຂອງສະຖານທີ່ບໍລິສຸດ ເປັນເຄື່ອງບູຊາໄຖ່ຄວາມຜິດບາບ 16ແລະໃຫ້ຜູ້ນັ້ນເອົາມາໃຊ້ແທນ
ຂອງບໍລິສຸດທີ່ຂາດໄປ ແລະເພີ່ມອີກໜຶ່ງໃນຫ້າຂອງລາຄາສິ່ງທີ່ຂາດໄປນັ້ນມາມອບໃຫ້ແກ່ປະ-
ໂລຫິດ ແລະ ປະໂລຫິດຈະເຮັດການໄຖ່ໂທດຂອງລາວດ້ວຍແກະຜູ້ທີ່ຖວາຍເປັນເຄື່ອງ ບູຊາ
ໄຖ່ຄວາມຜິດບາບ ແລະລາວຈະໄດ້ຮັບການອະໄພໂທດ
17ຖ້າຜູ້ໃດເຮັດຜິດ ຄືເຮັດສິ່ງທີ່ພຣະຜູ້ເປັນເຈົ້າໄດ້ບັນຊາບໍ່ໃຫ້ເຮັດ ເຖິງແມ່ນວ່າລາວເຮັດ
ໂດຍບໍ່ຮູ້ຕົວ ລາວກໍມີຄວາມຜິດ ຈະຕ້ອງຮັບໂທດຕາມຄວາມຊົ່ວຊ້າຂອງລາວ 18ໃຫ້ຜູ້ນັ້ນເອົາ
ແກະໂຕຜູ້ທີ່ດີທີ່ສຸດຈາກຝູງມາໃຫ້ປະໂລຫິດ ໃຫ້ເຈົ້າຕີລາຄາເປັນລາຄາເຄື່ອງບູຊາໄຖ່ຄວາມຜິດ
ບາບ ແລະໃຫ້ປະໂລຫິດເຮັດການໄຖ່ໂທດຂອງລາວຕາມຄວາມຜິດທີ່ລາວໄດ້ເຮັດໂດຍບໍ່ໄດ້
ເຈດຕະນາ ແລະລາວຈະໄດ້ຮັບການອະໄພໂທດ 19ເປັນເຄື່ອງບູຊາໄຖ່ຄວາມຜິດ ເພາະລາວໄດ້
ເຮັດຄວາມຜິດຕໍ່ພຣະຜູ້ເປັນເຈົ້າ"

# ບົດທີ 6

## ເຄື່ອງບູຊາໄຖ່ຄວາມຜິດ ແລະການຄືນດີກັນ

1ພຣະຜູ້ເປັນເຈົ້າກ່າວກັບໂມເຊວ່າ, 2"ຖ້າຜູ້ໃດເຮັດບາບ ແລະເຮັດການບໍ່ສັດຊື່ຕໍ່ພຣະຜູ້-
ເປັນເຈົ້າ ດ້ວຍການຂີ້ຕົວະເພື່ອນບ້ານໃນເລື່ອງການຝາກ ຫລືການປະກັນ ຫລືການລັກມາ
ຫລືຖ້າລາວໄດ້ຫລອກລວງເພື່ອນບ້ານ 3ຫລືຜູ້ນັ້ນໄດ້ພົບສິ່ງທີ່ເຮ່ຍໄປແລ້ວແຕ່ບໍ່ຍອມຮັບ ສາ-
ບານເປັນຄວາມບໍ່ຈິງ ໃນຂໍ້ເຫລົ່ານີ້ຖ້າຜູ້ໃດເຮັດກໍເປັນຄວາມຜິດ 4ເຫດສັນນັ້ນກໍໃຫ້ຜູ້ທີ່ເຮັດຜິດ
ມີໂທດເພາະຄວາມຜິດຂອງລາວ ໃຫ້ຜູ້ນັ້ນສົ່ງຄືນເຄື່ອງທີ່ໄດ້ມາຈາກການລັກ ຫລືສິ່ງໃດທີ່
ລາວໄດ້ມາດ້ວຍການຫລອກລວງ ຫລືສິ່ງທີ່ຝາກລາວໄວ້ ຫລືສິ່ງສູນຫາຍທີ່ລາວໄດ້ພົບ 5ສິ່ງ
ໃດໆທີ່ເປັນຄຳສາບານເທັດ ລາວຕ້ອງຄືນໃຫ້ເຕັມຈຳນວນ ແລະຈົ່ງເພີ່ມອີກໜຶ່ງໃນຫ້າ ແລະ
ມອບໃຫ້ແກ່ເຈົ້າຂອງໃນມື້ທີ່ລາວຖວາຍເຄື່ອງບູຊາໄຖ່ຄວາມຜິດ 6ໃຫ້ຜູ້ນັ້ນເອົາແກະໂຕຜູ້ທີ່ດີທີ່
ສຸດມາຈາກຝູງເປັນເຄື່ອງບູຊາໄຖ່ຄວາມຜິດ ຖວາຍແດ່ພຣະຜູ້ເປັນເຈົ້າມາມອບໃຫ້ປະໂລຫິດ
ໃຫ້ເຈົ້າຕີລາຄາເອງ ເປັນລາຄາເຄື່ອງບູຊາໄຖ່ຄວາມຜິດ 7ແລະໃຫ້ປະໂລຫິດເຮັດການໄຖ່ໂທດ
ຂອງລາວຕໍ່ພຣະພັກພຣະຜູ້ເປັນເຈົ້າ ແລະລາວຈະໄດ້ຮັບການອະໄພໃນທຸກສິ່ງທີ່ລາວໄດ້ເຮັດ
ໄປຊຶ່ງເປັນຄວາມຜິດບາບ"

## ປະໂລຫິດກັບເຄື່ອງເຜົາບູຊາ

8ພຣະຜູ້ເປັນເຈົ້າກ່າວກັບໂມເຊວ່າ, 9"ຈົ່ງສັ່ງແກ່ອາໂຣນແລະລູກຊາຍຂອງລາວວ່າ ຕໍ່ໄປນີ້
ເປັນກົດເລື່ອງເຄື່ອງເຜົາບູຊາ ເຄື່ອງເຜົາບູຊານັ້ນຈະຕ້ອງເຜົາຢູ່ເທິງແທ່ນບູຊາຕະຫລອດຄືນຈົນ
ຮຸ່ງເຊົ້າ ຈົ່ງໃຫ້ໄຟເທິງແທ່ນບູຊາເຜົາເຄື່ອງບູຊາລຸກຢູ່ຕະຫລອດ 10ໃຫ້ປະໂລຫິດນຸ່ງເສື້ອຜ້າ
ປ່ານ ແລະນຸ່ງໂສ້ງຜ້າປ່ານ ແລະໃຫ້ຕັກຂີ້ເທົ່າໄຟອອກມາຈາກໄຟທີ່ໄໝ້ເຄື່ອງເຜົາບູຊາໄປໄວ້
ຂ້າງແທ່ນບູຊາ 11ໃຫ້ຖອດເສື້ອທີ່ນຸ່ງຢູ່ອອກແລ້ວນຸ່ງເສື້ອອີກໂຕໜຶ່ງ ແລະເອົາຂີ້ເທົ່າໄຟອອກໄປ
ນອກຄ້າຍໃນບ່ອນສະອາດ 12ໃຫ້ຮັກສາໄຟທີ່ຢູ່ເທິງແທ່ນບູຊາໃຫ້ລຸກຢູ່ຕະຫລອດ ຢ່າໃຫ້ມອດ

ຈັກເທື່ອ ໃຫ້ປະໂລຫິດໃສ່ຟືນທຸກເຊົ້າແລະ ໃຫ້ລຽງເຄື່ອງເຜົາບູຊາໃຫ້ເປັນລະບຽບໄວ້ເທິງແທ່ນ
ບູຊາ ແລະເຜົາໄຂມັນຂອງເຄື່ອງບູຊາເພື່ອຄວາມສາມັກຄີທຳເທິງນັ້ນ [13]ຕ້ອງຮັກສາໃຫ້ໄຟຕິດຢູ່
ເທິງແທ່ນບູຊາຕະຫລອດ ຢ່າໃຫ້ມອດເດັດຂາດ

## ກົດຂອງການຖວາຍພືດຜົນເປັນເມັດ

[14]ຕໍ່ໄປນີ້ເປັນກົດຂອງການຖວາຍພືດຜົນເປັນເມັດໃຫ້ລູກຊາຍ ອາໂຣນ ຖວາຍເຄື່ອງບູຊານີ້ຕໍ່
ພຣະພັກພຣະຜູ້ເປັນເຈົ້າຕໍ່ໜ້າແທ່ນບູຊາ [15]ໃຫ້ປະໂລຫິດຄົນໜຶ່ງກຳຍອດແປ້ງກຳມືໜຶ່ງມາຈາກ
ພືດຜົນເປັນເມັດປົນນ້ຳມັນ ແລະເຄື່ອງກຳຍານທັງໝົດເທິງພືດຜົນເປັນເມັດ ແລະເຜົາສ່ວນນີ້
ເທິງແທ່ນບູຊາເປັນທີ່ລະນຶກ ເປັນກິ່ນຫອມທີ່ພໍພຣະໄທແດ່ພຣະຜູ້ເປັນເຈົ້າ [16]ສ່ວນທີ່ເຫລືອຢູ່
ນັ້ນໃຫ້ອາໂຣນ ແລະລູກຊາຍຂອງລາວກິນ ໃຫ້ກິນກັບເຂົ້າຈີ່ບໍ່ມີເຊື້ອແປ້ງໃນຫ້ອງທີ່ບໍລິສຸດ ໃຫ້
ກິນໃນລານຂອງຫໍເຕັນແຫ່ງຊຸມນຸມ [17]ຢ່າໃສ່ເຊື້ອແປ້ງໃນຂະໜົມນັ້ນ ແລ້ວປີ້ງ ເຮົາໄດ້ໃຫ້ສ່ວນ
ນີ້ເປັນສ່ວນເຄື່ອງບູຊາດ້ວຍໄຟຂອງເຮົາອັນຕົກແກ່ລາວເປັນສິ່ງທີ່ບໍລິສຸດທີ່ສຸດ ເຊັ່ນດຽວກັບ
ເຄື່ອງບູຊາໄຖ່ບາບ ແລະເຄື່ອງບູຊາໄຖ່ຄວາມຜິດ [18]ໃຫ້ລູກຊາຍທັງຫລາຍຂອງອາໂຣນກິນສິ່ງ
ນີ້ ເປັນກົດເກນຖາວອນ ຕະຫລອດຊົ່ວອາຍຸຂອງເຈົ້າຈາກເຄື່ອງບູຊາດ້ວຍໄຟ ຂອງພຣະຜູ້-
ເປັນເຈົ້າ ຜູ້ໃດທີ່ຖືກຕ້ອງສິ່ງເຫລົ່ານີ້ຈະບໍລິສຸດ”

## ການຖວາຍພືດຜົນເປັນເມັດຂອງປະໂລຫິດ

[19]ພຣະຜູ້ເປັນເຈົ້າກ່າວກັບ ໂມເຊ ວ່າ [20]“ຕໍ່ໄປນີ້ເປັນເຄື່ອງບູຊາທີ່ ອາໂຣນ ແລະລູກຊາຍທັງ-
ຫລາຍຂອງລາວຈະຕ້ອງຖວາຍແດ່ພຣະຜູ້ເປັນເຈົ້າໃນມື້ທີ່ລາວຮັບຄວາມຜິດ ຄືຍອດແປ້ງໜຶ່ງ
ໃນສິບເອຟາເປັນພືດຜົນເປັນເມັດ ໃຫ້ຖວາຍຕອນເຊົ້າເຄິ່ງໜຶ່ງ ຕອນແລງເຄິ່ງໜຶ່ງ [21]ໃຫ້ປົນກັບ
ນ້ຳມັນ ຄົນໃຫ້ເຂົ້າກັນດີ ແລ້ວປີ້ງເທິງເຫລັກ ແລ້ວເຮັດເປັນຕ່ອນນ້ອຍໆເປັນເຄື່ອງບູຊາພືດຜົນ
ເປັນເມັດ ແລ້ວຖວາຍເປັນກິ່ນຫອມທີ່ພໍພຣະໄທແດ່ພຣະຜູ້ເປັນເຈົ້າ [22]ແລະປະໂລຫິດຈາກບັນ-
ດາລູກຊາຍຂອງ ອາໂຣນ ຜູ້ຮັບຄວາມຜິດແທນຈະຖວາຍສິ່ງນີ້ ເປັນກົດເກນສືບໆໄປເປັນນິດ
ໃຫ້ເຜົາເຄື່ອງບູຊາທັງໝົດ ແດ່ພຣະຜູ້ເປັນເຈົ້າ [23]ແລະພືດຜົນເປັນເມັດຂອງປະໂລຫິດທຸກຢ່າງ
ໃຫ້ເຜົາໄຟໃຫ້ໝົດ ຢ່າກິນ”

## ເຄື່ອງບູຊາລົບລ້າງບາບ

[24]ພຣະຜູ້ເປັນເຈົ້າກ່າວກັບ ໂມເຊວ່າ, [25]“ຈົ່ງກ່າວແກ່ອາໂຣນ ແລະລູກຊາຍຂອງລາວວ່າ ຕໍ່
ໄປນີ້ເປັນກົດຂອງການຖວາຍເຄື່ອງບູຊາໄຖ່ບາບ ໃຫ້ຂ້າສັດທີ່ເປັນເຄື່ອງບູຊາໄຖ່ບາບໃນບ່ອນທີ່
ຂ້າສັດອັນເປັນເຄື່ອງເຜົາບູຊາຕໍ່ພຣະພັກພຣະຜູ້ເປັນເຈົ້າ ເປັນຂອງບໍລິສຸດທີ່ສຸດ [26]ໃຫ້ປະໂລ-
ຫິດຜູ້ຖວາຍເຄື່ອງບູຊາໄຖ່ບາບກິນສັດນັ້ນ ໃຫ້ລາວກິນໃນຫ້ອງທີ່ບໍລິສຸດ ໃນລານຫໍເຕັນແຫ່ງ
ຊຸມນຸມ [27]ຄົນທຸກຄົນທີ່ຈະແຕະຕ້ອງຊີ້ນສັດນັ້ນຈະບໍລິສຸດ ແລະເມື່ອຊິດເລືອດຕິດເສື້ອ ກໍໃຫ້ຊັກ
ເສື້ອສ່ວນທີ່ຕິດເລືອດນັ້ນໃນຫ້ອງທີ່ບໍລິສຸດ [28]ຖ້າລາວຕົ້ມຊີ້ນສັດນັ້ນໃນໝໍ້ດິນ ຈົ່ງທຳລາຍໝໍ້ດິນ
ນັ້ນ ຖ້າຕົ້ມໃນໝໍ້ທອງກໍໃຫ້ຜັດ ແລະລ້າງດ້ວຍນ້ຳ [29]ຜູ້ຊາຍທຸກຄົນທີ່ເປັນປະໂລຫິດຈົ່ງກິນຊີ້ນ
ນັ້ນ ເປັນຂອງບໍລິສຸດທີ່ສຸດ [30]ແຕ່ເຄື່ອງບູຊາໄຖ່ບາບ ຊຶ່ງປະໂລຫິດເອົາເລືອດເຂົ້າໄປໃນຫໍເຕັນ
ແຫ່ງຊຸມນຸມ ເພື່ອເຮັດການໄຖ່ໂທດໃນບ່ອນບໍລິສຸດນັ້ນ ຢ່າກິນ ຈົ່ງເຜົາໄຟ”

# ບົດທີ 7

## ການຖວາຍເຄື່ອງບູຊາໄຖ່ຄວາມຜິດ

[1]“ເຊັ່ນດຽວກັບພຣະບັນຍັດວ່າດ້ວຍເຄື່ອງບູຊາໄຖ່ຄວາມຜິດ ຊຶ່ງເປັນສິ່ງບໍລິສຸດທີ່ສຸດ [2]ໃນ
ບ່ອນທີ່ຂ້າສັດເປັນເຄື່ອງບູຊາດ້ວຍໄຟພວກເຂົາຕ້ອງຂ້າສັດເປັນເຄື່ອງເຜົາບູຊາໄຖ່ຄວາມຜິດໃນ
ບ່ອນນັ້ນ ແລະໃຫ້ເອົາເລືອດສັດນັ້ນມາຊິດໃສ່ແທ່ນ ແລະຮອບແທ່ນບູຊາ [3]ແລະໃຫ້ເອົາໄຂມັນ
ຂອງສັດນັ້ນຖວາຍບູຊາທັງໝົດ ຫາງທີ່ເປັນໄຂມັນ ໄຂມັນທີ່ຫຸ້ມເຄື່ອງໃນ [4]ແລະໝາກໄຂ່ຫລັງ
ທັງສອງໜ່ວຍກັບໄຂມັນທີ່ຕິດປັ້ນແອວນັ້ນ ແລະໃຫ້ເອົາໜັງບາງໆທີ່ຕິດຢູ່ເທິງຕັບອອກພ້ອມກັບ
ໝາກໄຂ່ຫລັງ [5]ແລະປະໂລຫິດຈຶ່ງເອົາສິ່ງເຫລົ່ານີ້ມາເຜົາ ເທິງແທ່ນເປັນເຄື່ອງບູຊາດ້ວຍໄຟ
ຖວາຍແດ່ພຣະຜູ້ເປັນເຈົ້າ ເປັນເຄື່ອງບູຊາໄຖ່ຄວາມຜິດ [6]ຜູ້ຊາຍທຸກຄົນທີ່ເປັນປະໂລຫິດຈຶ່ງ
ກິນແຕ່ຊີ້ນ ໃຫ້ພວກເຂົາກິນໃນຫ້ອງບໍລິສຸດ ເປັນຂອງບໍລິສຸດທີ່ສຸດ [7]ເຄື່ອງບູຊາໄຖ່ໂທດເປັນ
ຢ່າງໃດເຄື່ອງບູຊາໄຖ່ບາບກໍເປັນຢ່າງນັ້ນ ມີພຣະບັນຍັດອັນດຽວກັນ ທັງສອງເຄື່ອງບູຊານີ້ເປັນ
ຂອງປະໂລຫິດ ຜູ້ໃຊ້ເຄື່ອງບູຊາເຮັດການໄຖ່ໂທດຈະໄດ້ເຄື່ອງບູຊານັ້ນ

[8]ຝ່າຍປະໂລຫິດສາມາດເອົາເຄື່ອງບູຊາຂອງຜູ້ໃດຜູ້ໜຶ່ງທີ່ມາຖວາຍໄດ້ ເຄື່ອງເຜົາບູຊາໜັງ
ສັດຂອງເຄື່ອງເຜົາບູຊາທີ່ຕົນຖວາຍກໍເປັນຂອງປະໂລຫິດ [9]ພືດຜົນເປັນເມັດທຸກຢ່າງທີ່ປີ້ງໃນ
ເຕົາໄຟ ແລະສິ່ງທັງໝົດທີ່ຈືນໃນໝໍ້ຂາງ ຫລືທີ່ເຫລັກປີ້ງ ໃຫ້ຕົກເປັນຂອງປະໂລຫິດຜູ້ຖວາຍ
ຂອງເຫລົ່ານັ້ນ [10]ພືດຜົນເປັນເມັດທີ່ນວດດ້ວຍນໍ້າມັນ ຫລືບໍ່ໄດ້ນວດຈະຕົກເປັນຂອງລູກຊາຍ
ອາໂຣນທັງໝົດ

## ເຄື່ອງຖວາຍເພື່ອຄວາມສາມັກຄີທຳ

[11]ຕໍ່ໄປນີ້ເປັນກົດເລື່ອງເຄື່ອງຖວາຍເພື່ອຄວາມສາມັກຄີທຳຊຶ່ງພວກເຂົາເອົາມາຖວາຍແດ່
ພຣະຜູ້ເປັນເຈົ້າ [12]ຖ້າຊາຍຄົນໜຶ່ງຖວາຍເປັນເຄື່ອງໂມທະນາພຣະຄຸນ ກໍໃຫ້ລາວຖວາຍເຂົ້າ-
ໜົມບໍ່ມີເຊື້ອແປ້ງນວດດ້ວຍນໍ້າມັນ ເຂົ້າໜົມແຜ່ນບໍ່ມີເຊື້ອແປ້ງທາດ້ວຍນໍ້າມັນ ເຂົ້າໜົມຍອດ
ແປ້ງນວດດ້ວຍນໍ້າມັນ [13]ໃຫ້ລາວເອົາເຂົ້າຈີ່ບໍ່ມີເຊື້ອແປ້ງມາຖວາຍຮ່ວມກັບເຄື່ອງບູຊາ ພ້ອມກັບ
ເຄື່ອງຖວາຍເພື່ອຄວາມສາມັກຄີທຳທີ່ຖວາຍເປັນການໂມທະນາພຣະຄຸນ [14]ແລະເຂົ້າໜົມທັງ-
ຫລາຍນັ້ນໃຫ້ລາວເອົາແຕ່ລະກ້ອນຂອງທຸກໆຊະນິດມາຖວາຍແດ່ພຣະຜູ້ເປັນເຈົ້າ ຊຶ່ງເປັນ
ສ່ວນຍົກໃຫ້ແກ່ປະໂລຫິດຜູ້ເອົາເລືອດໄປຊິດໃສ່ແທ່ນບູຊາ [15]ສ່ວນຊີ້ນສັດເພື່ອໂມທະນາພຣະ-
ຄຸນນັ້ນ ພວກເຂົາຈະຕ້ອງກິນໃຫ້ໝົດໃນມື້ທີ່ເຮັດການຖວາຍບູຊາ ຢ່າໃຫ້ເຫລືອໄວ້ຈົນຮອດຮຸ່ງ
ເຊົ້າ

[16]ຖ້າເຄື່ອງບູຊາທີ່ເພິ່ນເອົາມາຖວາຍນັ້ນເປັນເຄື່ອງບູຊາສຳຫລັບປະຕິຍານ ຫລືເປັນເຄື່ອງບູ-
ຊາຕາມໃຈສະໝັກ ໃຫ້ພວກເຂົາກິນໃນມື້ທີ່ເຮັດການຖວາຍບູຊາ ແລະໃນມື້ອື່ນເຊົ້າພວກເຂົາຍັງ
ກິນສ່ວນທີ່ເຫລືອໄດ້ [17]ສ່ວນຊີ້ນບູຊາທີ່ເຫລືອໃຫ້ເຜົາໄຟ ໃນມື້ທີສາມ [18]ຖ້າຜູ້ໃດກິນຊີ້ນສັດໃນ
ມື້ທີສາມ ຜູ້ຖວາຍນັ້ນຈະບໍ່ເປັນທີ່ພໍພຣະໄທ ແລະບໍ່ໄດ້ຖືວ່າເຄື່ອງບູຊານັ້ນເປັນທີ່ພໍພຣະໄທ ແຕ່
ເປັນການກະທຳທີ່ໜ້າກຽດຊັງ ແລະຜູ້ທີ່ກິນກໍຈະຕ້ອງໄດ້ຮັບໂທດຕາມຄວາມຊົ່ວຊ້າຂອງລາວ
[19]ຊີ້ນທີ່ໄປຖືກຂອງທີ່ເປັນມົນທິນໃດໆ ຢ່າກິນ ຈົ່ງເຜົາໄຟຖິ້ມ ບຸກຄົນທີ່ບໍລິສຸດທຸກຄົນກິນຊີ້ນ

ໄດ້ [20]ແລະຖ້າບຸກຄົນໃດຫາກກິນຊີ້ນສັດບູຊາອັນເປັນເຄື່ອງບູຊາແດ່ພຣະຜູ້ເປັນເຈົ້າ ໂດຍທີ່ຕົນ
ຍັງມີມົນທິນຕິດໂຕຢູ່ ຕ້ອງຕັດຜູ້ນັ້ນອອກຈາກຊຸມຊົນຂອງຕົນ [21]ແລະຖ້າຜູ້ໜຶ່ງຜູ້ໃດແຕະຕ້ອງ
ສິ່ງທີ່ເປັນມົນທິນ ບໍ່ວ່າຈະເປັນມົນທິນຂອງຄົນ ຫລືເປັນສັດທີ່ມົນທິນ ຫລືເປັນສິ່ງທີ່ໜ້າກຽດຊັງ
ອັນເປັນມົນທິນ ແລະຜູ້ນັ້ນມາກິນຊີ້ນທີ່ຖວາຍບູຊາແດ່ພຣະຜູ້ເປັນເຈົ້າ ໃຫ້ຕັດຜູ້ນັ້ນອອກຈາກ
ຊຸມຊົນຂອງຕົນ”

[22]ພຣະຜູ້ເປັນເຈົ້າກ່າວກັບ ໂມເຊ ວ່າ, [23]“ຈົ່ງກ່າວແກ່ຄົນ ອິສຣາເອນ ວ່າ ເຈົ້າທັງຫລາຍຢ່າ
ກິນໄຂມັນຂອງງົວ ຂອງແກະ ຫລືຂອງແບ້ຈັກຢ່າງ [24]ໄຂມັນຂອງສັດທີ່ຕາຍເອງ ແລະໄຂມັນ
ຂອງສັດທີ່ກັດກັນຕາຍ ຈະເອົາໄປເຮັດຢ່າງອື່ນກໍໄດ້ ແຕ່ຢ່າກິນເດັດຂາດ [25]ຖ້າບຸກຄົນໃດຄົນ
ໜຶ່ງກິນໄຂມັນສັດອັນເປັນເຄື່ອງບູຊາດ້ວຍໄຟຖວາຍແດ່ພຣະຜູ້ເປັນເຈົ້າ ໃຫ້ຕັດຜູ້ທີ່ກິນນັ້ນອອກ
ຈາກຊຸມຊົນຂອງຕົນ [26]ແລະເຈົ້າຢ່າກິນເລືອດຈັກຢ່າງ ບໍ່ວ່າເລືອດຂອງສັດປີກຫລືເລືອດສັດໃນ
ທີ່ໃດໆທີ່ເຈົ້າອາໄສຢູ່ [27]ຜູ້ໃດກິນເລືອດຢ່າງໜຶ່ງຢ່າງໃດ ໃຫ້ຕັດຜູ້ນັ້ນອອກຈາກຊຸມຊົນຂອງ
ຕົນ”

## ສ່ວນສຳລັບພວກປະໂລຫິດ

[28]ພຣະຜູ້ເປັນເຈົ້າກ່າວກັບ ໂມເຊ ວ່າ, [29]“ຈົ່ງກ່າວແກ່ຄົນ ອິສຣາເອນ ວ່າ ຜູ້ໃດຈະຖວາຍ
ເຄື່ອງບູຊາອັນເປັນສາມັກຄີທຳແດ່ພຣະຜູ້ເປັນເຈົ້າ ໃຫ້ຜູ້ນັ້ນເອົາເຄື່ອງບູຊາຂອງຕົນມາຖວາຍ
ແດ່ພຣະຜູ້ເປັນເຈົ້າ [30]ໃຫ້ລາວເອົາເຄື່ອງຖວາຍບູຊາດ້ວຍໄຟແດ່ພຣະຜູ້ເປັນເຈົ້າມາດ້ວຍມື
ຂອງຕົນເອງ ໃຫ້ລາວເອົາໄຂມັນມາພ້ອມກັບຊີ້ນໜ້າເອິກ ເພື່ອເອົາຊີ້ນໜ້າເອິກນັ້ນມາເປັນ
ເຄື່ອງບູຊາຖວາຍຕໍ່ພຣະພັກພຣະຜູ້ເປັນເຈົ້າ [31]ໃຫ້ປະໂລຫິດເອົາໄຂມັນມາເຜົາເທິງແທ່ນບູຊາ
ແຕ່ຊີ້ນໜ້າເອິກນັ້ນຈະຕົກເປັນຂອງ ອາໂຣນ ແລະລູກຊາຍຂອງລາວ [32]ແຕ່ຂາໜ້າເບື້ອງຂວາ
ຂອງສັດນັ້ນ ເຈົ້າຈົ່ງໃຫ້ປະໂລຫິດເປັນສ່ວນຖວາຍຈາກເຄື່ອງບູຊາເພື່ອຄວາມສາມັກຄີທຳ [33]ໃນ
ພວກລູກຊາຍ ອາໂຣນ ຜູ້ຖວາຍເລືອດແຫ່ງການສາມັກຄີທຳ ຈະໄດ້ຮັບຂາໜ້າເບື້ອງຂວາເປັນ
ສ່ວນຂອງລາວ [34]ເພາະວ່າຊີ້ນໜ້າເອິກທີ່ເປັນຂອງຖວາຍ ແລະຊີ້ນຂາທີ່ຖວາຍນັ້ນເຮົາໄດ້ເອົາ
ຈາກຄົນ ອິສຣາເອນ ຈາກເຄື່ອງບູຊາເພື່ອຄວາມສາມັກຄີທຳ ແລະເຮົາໄດ້ມອບໃຫ້ແກ່ອາໂຣນ
ປະໂລຫິດ ແລະລູກຊາຍຂອງລາວເປັນກົດເກນອັນຖາວອນຈາກຄົນ ອິສຣາເອນ

[35]ນີ້ເປັນສ່ວນຈາກການເຈີມ ອາໂຣນ ແລະການເຈີມລູກຊາຍຂອງລາວຈາກເຄື່ອງບູຊາດ້ວຍ
ໄຟຖວາຍແດ່ພຣະຜູ້ເປັນເຈົ້າມອບໝາຍໃຫ້ແກ່ພວກເຂົາທັງຫລາຍໃນມື້ທີ່ພວກເຂົາທັງຫລາຍ
ຖືກຖວາຍໃຫ້ບົວລະບັດພຣະຜູ້ເປັນເຈົ້າໃນຕຳແໜ່ງປະໂລຫິດ [36]ຊຶ່ງພຣະຜູ້ເປັນເຈົ້າບັນຊາຄົນ
ອິສຣາເອນໃຫ້ມອບສິ່ງເຫລົ່ານີ້ໃຫ້ແກ່ພວກເຂົາທັງຫລາຍໃນມື້ທີ່ພວກເຂົາທັງຫລາຍໄດ້ຮັບການ
ເຈີມເປັນປະໂລຫິດ ເປັນກົດເກນອັນຖາວອນຕະຫລອດຊົ່ວອາຍຸຂອງພວກເຂົາ”

[37]ທັງໝົດນີ້ເປັນພຣະບັນຍັດເຄື່ອງເຜົາບູຊາ ເຄື່ອງພືດຜົນເປັນເມັດ ເຄື່ອງບູຊາໄຖ່ບາບ
ເຄື່ອງບູຊາໄຖ່ຄວາມຜິດ ເຄື່ອງບູຊາສະຖາປານາ ແລະເຄື່ອງບູຊາເພື່ອຄວາມສາມັກຄີທຳ
[38]ຊຶ່ງພຣະຜູ້ເປັນເຈົ້າໄດ້ບັນຊາ ໂມເຊ ເທິງພູເຂົາຊີນາຍ ໃນມື້ທີ່ພຣະອົງສັ່ງໃຫ້ຄົນ ອິສຣາເອນ
ເອົາເຄື່ອງບູຊາມາຖວາຍ ແດ່ພຣະຜູ້ເປັນເຈົ້າໃນຖິ່ນແຫ້ງແລ້ງກັນດານຊີນາຍ

# ບົດທີ 8

## ການແຕ່ງຕັ້ງພວກປະໂລຫິດ

1ພຣະຜູ້ເປັນເຈົ້າ ກ່າວກັບ ໂມເຊ ວ່າ 2“ຈົ່ງ ເອົາ ອາໂຣນ ແລະລູກຊາຍຂອງລາວມາພ້ອມກັບ
ເສື້ອຜ້າທັງຫລາຍກັບ ນໍ້າມັນເຈີມ ງົວອັນເປັນເຄື່ອງບູຊາໄຖ່ບາບ ແກະຜູ້ສອງໂຕ ກະຕ່າເຂົ້າຈີ່
ບໍ່ມີເຊື້ອແປ້ງ 3ແລະຈົ່ງບອກຊຸມນຸມຊົນທັງໝົດໃຫ້ປະຊຸມກັນຢູ່ປະຕູຫໍເຕັນແຫ່ງຊຸມນຸມ” 4ແລະ
ໂມເຊກໍເຮັດດັ່ງທີ່ພຣະຜູ້ເປັນເຈົ້າ ຊົງບັນຊາແກ່ທ່ານ ແລະຊຸມນຸມຊົນກໍປະຊຸມກັນຢູ່ປະຕູຫໍເຕັນ
ແຫ່ງຊຸມນຸມ 5ໂມເຊກ່າວແກ່ຊຸມນຸມຊົນວ່າ “ຕໍ່ໄປນີ້ເປັນສິ່ງຊຶ່ງພຣະຜູ້ເປັນເຈົ້າ ໄດ້ບັນຊາໃຫ້
ເຮັດ”

6ໂມເຊກໍເອົາ ອາໂຣນ ແລະລູກຊາຍທັງຫລາຍຂອງລາວມາຊໍາລະຮ່າງກາຍດ້ວຍນໍ້າ 7ແລ້ວ
ໃຫ້ນຸ່ງເສື້ອຊັ້ນໃນ ແລະສາຍຄາດແອວ ແລ້ວໃຫ້ ນຸ່ງເສື້ອຄຸມຊັ້ນນອກ ແລະນຸ່ງເອໂຟດໃຫ້
ພວກເຂົາ ເອົາສາຍຮັດເອໂຟດຜູກເອໂຟດໃຫ້ຕິດໄວ້

## ການນຸ່ງເຄື່ອງ ແລະການເຈີມມະຫາປະໂລຫິດ

8ແລະ ໂມເຊ ໄດ້ນຸ່ງທັບຊວງໃຫ້ອາໂຣນ ແລະໃສ່ ອູຣິມກັບທູມມິມ[ກ] ໄວ້ໃນທັບຊວງນັ້ນ
9ແລະໄດ້ເອົາແພຍຽນມາຍຽນເທິງຫົວລາວ ແລະມົງກຸດທອງຄໍາ ອັນບໍລິສຸດມາວາງໄວ້ເທິງແພ
ຍຽນຫົວດ້ານໜ້າ ດັ່ງທີ່ພຣະຜູ້ເປັນເຈົ້າ ໄດ້ສັ່ງ ໂມເຊ ໄວ້ນັ້ນ

10ແລ້ວ ໂມເຊ ເອົານໍ້າມັນເຈີມມາເຈີມຫໍເຕັນ ແລະທຸກສິ່ງທີ່ຢູ່ໃນນັ້ນ ຊໍາລະໃຫ້ເປັນຂອງບໍລິ-
ສຸດ 11ລາວເອົານໍ້າມັນເຈີມຊິດໃສ່ເທິງແທ່ນບູຊາເຈັດເທື່ອເຈີມແທ່ນບູຊາ ແລະເຈີມເຄື່ອງໃຊ້
ປະຈໍາແທ່ນບູຊາທັງໝົດ ເຈີມຂັນ ແລະພານຮອງຂັນເພື່ອຊໍາລະໃຫ້ເປັນຂອງບໍລິສຸດ 12ລາວ
ຖອກນໍ້າມັນເຈີມລົງເທິງຫົວຂອງ ອາໂຣນ ແລ້ວເຈີມລາວໄວ້ເພື່ອຊໍາລະໃຫ້ບໍລິສຸດ 13ໂມເຊກໍ
ເອົາລູກຊາຍ ອາໂຣນ ເຂົ້າມານຸ່ງເສື້ອແລ້ວຄາດແອວໃຫ້ ແລະເອົາໝວກໃສ່ໄວ້ເທິງຫົວຂອງພວກ
ເຂົາ ດັ່ງທີ່ພຣະຜູ້ເປັນເຈົ້າ ໄດ້ສັ່ງ ໂມເຊ ໄວ້

## ເຄື່ອງຖວາຍສໍາລັບການແຕ່ງຕັ້ງພວກປະໂລຫິດ

14ແລ້ວທ່ານຈຶ່ງ ເອົາງົວ ໂຕຜູ້ອັນ ເປັນ ເຄື່ອງບູຊາ ໄຖ່ບາບ ເຂົ້າມາ ອາໂຣນ ແລະລູກຊາຍທັງ-
ຫລາຍຂອງລາວກໍເອົາມືຂອງຕົນວາງໄວ້ເທິງຫົວງົວອັນເປັນເຄື່ອງບູຊາໄຖ່ບາບນັ້ນ 15ໂມເຊກໍ
ຂ້າງົວໂຕນັ້ນ ເອົານິ້ວມືຈຸ່ມເລືອດໄປເຈີມທີ່ຈອມຮອບແທ່ນບູຊາ ຊໍາລະແທ່ນບູຊາໃຫ້ບໍລິສຸດ
ແລ້ວຖອກເລືອດໃສ່ຕີນ ຂອງແທ່ນ ຖວາຍແທ່ນບູຊາໄວ້ເປັນສິ່ງບໍລິສຸດ ເພື່ອເຮັດການຊໍາລະ
ແທ່ນບູຊານັ້ນ 16ລາວເອົາໄຂມັນທັງໝົດທີ່ຢູ່ກັບເຄື່ອງໃນ ແລະໜັງບາງໆເທິງຕັບ ແລະໝາກ
ໄຂ່ຫລັງສອງໜ່ວຍພ້ອມກັບໄຂມັນແລ້ວ ໂມເຊກໍເຜົາສິ່ງເຫລົ່ານີ້ເທິງແທ່ນບູຊາ 17ແຕ່ງົວ ແລະ
ໜັງງົວ ກັບຊີ້ນ ແລະອາຈົມຂອງມັນລາວເອົາໄປເຜົາໄຟຢູ່ນອກຄ້າຍດັ່ງທີ່ພຣະຜູ້ເປັນເຈົ້າ ໄດ້
ສັ່ງ ໂມເຊ ໄວ້

18ແລ້ວລາວກໍເອົາແກະຜູ້ອັນເປັນເຄື່ອງເຜົາບູຊາເຂົ້າມາ ອາໂຣນກັບລູກຊາຍທັງຫລາຍຂອງ
ລາວກໍວາງມືໄວ້ເທິງຫົວຂອງແກະໂຕນັ້ນ 19ໂມເຊກໍຂ້າແກະນັ້ນ ເອົາເລືອດມາຊິດໃສ່ເທິງແທ່ນ

---

[ກ]ພາສາອັງກິດ Urim ແລະ Thummim

ແລະຮອບແທ່ນບູຊາ 20ລາວໄດ້ຟັນແກະອອກເປັນຕ່ອນໆ ໂມເຊກໍເຜົາຫົວແລະຕ່ອນແກະທັງ-
ຫລາຍກັບໄຂມັນ 21ແລະເອົານ້ຳລ້າງເຄື່ອງໃນ ແລະຂາແລ້ວ ໂມເຊກໍເອົາແກະທັງໝົດມາເຜົາ
ເທິງແທ່ນເປັນເຄື່ອງເຜົາບູຊາ ເປັນກິ່ນຫອມທີ່ພໍພຣະໄທ ເປັນເຄື່ອງບູຊາດ້ວຍໄຟຖວາຍແດ່
ພຣະຜູ້ເປັນເຈົ້າ ດັ່ງທີ່ພຣະຜູ້ເປັນເຈົ້າໄດ້ສັ່ງໂມເຊໄວ້

22ລາວຈຶ່ງເອົາແກະຜູ້ອີກໂຕໜຶ່ງເຂົ້າມາຄືແກະໂຕຜູ້ທີ່ເປັນເຄື່ອງບູຊາສຳລັບແຕ່ງຕັ້ງ ແລະ
ອາໂຣນກັບລູກຊາຍທັງຫລາຍຂອງລາວກໍເອົາມືຂອງຕົນວາງໄວ້ເທິງຫົວຂອງແກະໂຕນັ້ນ
23ໂມເຊກໍຂ້າແກະນັ້ນ ເອົາເລືອດເຈີມໃສ່ປາຍຫູເບື້ອງຂວາຂອງອາໂຣນ ແລະໃສ່ນິ້ວໂປ້ມືຂວາ
ຂອງລາວ ແລະໃສ່ນິ້ວໂປ້ຕີນຂວາຂອງລາວດ້ວຍ 24ແລ້ວເອົາລູກຊາຍທັງຫລາຍຂອງອາໂຣນ
ເຂົ້າມາ ໂມເຊເອົາເລືອດເຈີມໃສ່ປາຍຫູເບື້ອງຂວາ ໃສ່ນິ້ວໂປ້ມືເບື້ອງຂວາ ໃສ່ນິ້ວໂປ້ຕີນເບື້ອງ
ຂວາຂອງພວກເຂົາ ແລະໂມເຊເອົາເລືອດມາຊິດໃສ່ເທິງແທ່ນ ແລະຮອບແທ່ນບູຊາ

25ແລ້ວລາວຈຶ່ງເອົາໄຂມັນ ແລະຫາງທີ່ເປັນໄຂມັນ ແລະໄຂມັນທັງໝົດທີ່ຢູ່ກັບເຄື່ອງໃນ
ແລະໜັງບາງໆເທິງຕັບ ແລະໝາກໄຂ່ຫລັງສອງໜ່ວຍກັບໄຂມັນທີ່ຕິດຢູ່ ແລະຂາເບື້ອງຂວາ
26ລາວເອົາເຂົ້າໜົມບໍ່ມີເຊື້ອແປ້ງໜຶ່ງກ້ອນຈາກກະຕ່າເຂົ້າໜົມບໍ່ມີເຊື້ອແປ້ງ ຊຶ່ງຢູ່ຕໍ່ພຣະພັກ
ພຣະຜູ້ເປັນເຈົ້າ ແລະເອົາເຂົ້າໜົມນວດດ້ວຍນ້ຳມັນກ້ອນໜຶ່ງ ແລະເຂົ້າໜົມແຜ່ນໜຶ່ງ ວາງ
ຂອງເຫລົ່ານີ້ໄວ້ເທິງໄຂມັນແລະ ເທິງຂາໜ້າເບື້ອງຂວາ 27ລາວເອົາສິ່ງເຫລົ່ານີ້ວາງໄວ້ໃນມື
ຂອງອາໂຣນ ແລະມືຂອງລູກຊາຍທັງຫລາຍຂອງລາວ ແລະເອົານຳມາເປັນເຄື່ອງບູຊາຖວາຍຕໍ່
ພຣະພັກພຣະຜູ້ເປັນເຈົ້າ 28ແລ້ວໂມເຊກໍຮັບຂອງເຫລົ່ານັ້ນມາຈາກມືຂອງພວກເຂົາທັງຫລາຍ
ແລະເຜົາເທິງແທ່ນບູຊາ ເທິງເຄື່ອງເຜົາບູຊາເປັນເຄື່ອງບູຊາສຳລັບການແຕ່ງຕັ້ງ ເປັນກິ່ນຫອມ
ທີ່ພໍພຣະໄທ ເປັນເຄື່ອງບູຊາດ້ວຍໄຟຖວາຍແດ່ພຣະຜູ້ເປັນເຈົ້າ 29ໂມເຊເອົາຊີ້ນໜ້າເອິກມາ
ເປັນເຄື່ອງບູຊາຖວາຍຕໍ່ພຣະພັກພຣະຜູ້ເປັນເຈົ້າ ແກະບູຊາສຳລັບການແຕ່ງຕັ້ງເປັນສ່ວນຂອງ
ໂມເຊ ດັ່ງທີ່ພຣະຜູ້ເປັນເຈົ້າໄດ້ສັ່ງໂມເຊ

30ແລ້ວໂມເຊກໍເອົານ້ຳມັນເຈີມ ແລະເລືອດຊຶ່ງຢູ່ເທິງແທ່ນບູຊາ ຊິດໃສ່ເທິງອາໂຣນແລະ
ເຄື່ອງປະຈຳຕຳແໜ່ງຂອງລາວ ແລະເທິງລູກຊາຍທັງຫລາຍ ກັບເທິງເຄື່ອງປະຈຳຕຳແໜ່ງຂອງ
ລູກຊາຍທັງຫລາຍຂອງລາວ ດັ່ງນີ້ແຫລະ ໂມເຊກໍຊຳລະອາໂຣນກັບເຄື່ອງປະຈຳຕຳແໜ່ງຂອງ
ລາວໃຫ້ບໍລິສຸດລູກຊາຍທັງຫລາຍຂອງລາວກັບເຄື່ອງປະຈຳຕຳແໜ່ງຂອງລູກຊາຍດ້ວຍ 31ໂມເຊ
ສັ່ງອາໂຣນແລະລູກຊາຍທັງຫລາຍຂອງລາວວ່າ “ຈົ່ງຕົ້ມຊີ້ນທີ່ປະຕູຫໍເຕັນແຫ່ງຊຸມນຸມ ແລະກິນ
ໃນບ່ອນນັ້ນກັບເຂົ້າຈີ່ຊຶ່ງຢູ່ໃນກະຕ່າເຄື່ອງບູຊາສຳລັບການແຕ່ງຕັ້ງ ດັ່ງທີ່ຂ້າພະເຈົ້າໄດ້ສັ່ງທ່ານ
ວ່າ ອາໂຣນແລະລູກຊາຍທັງຫລາຍຂອງລາວຈົ່ງກິນສິ່ງທັງຫລາຍນັ້ນ 32ຊີ້ນ ແລະເຂົ້າຈີ່ທີ່
ເຫລືອນັ້ນທ່ານຈົ່ງເຜົາໄຟເສຍ 33ແລະທ່ານທັງຫລາຍຢ່າອອກໄປນອກປະຕູຫໍເຕັນແຫ່ງຊຸມນຸມ
ຕະຫລອດເຈັດມື້ ຈົນກວ່າຮອດມື້ກຳນົດການແຕ່ງຕັ້ງຈະສຳເລັດ ເພາະວ່າການແຕ່ງຕັ້ງທ່ານ
ທັງຫລາຍໄວ້ເປັນປະໂລຫິດນັ້ນກໍກິນເວລາເຈັດມື້ 34ສິ່ງທີ່ໄດ້ເຮັດໃນມື້ນີ້ ພຣະຜູ້ເປັນເຈົ້າໄດ້ສັ່ງ
ໃຫ້ເຮັດເພື່ອເປັນການໄຖ່ໂທດຂອງທ່ານ 35ທ່ານຈົ່ງຢູ່ທີ່ປະຕູຫໍເຕັນແຫ່ງຊຸມນຸມທັງກາງວັນ
ແລະກາງຄືນຕະຫລອດເຈັດມື້ເຮັດສິ່ງທີ່ພຣະຜູ້ເປັນເຈົ້າໄດ້ສັ່ງໄວ້ ໃຫ້ພວກທ່ານຖືຮັກສາ ຈົ່ງຖື

ຮັກສາເພື່ອຈະບໍ່ຕາຍ ເພາະນີ້ເປັນສິ່ງທີ່ຂ້າພະເຈົ້າໄດ້ຮັບບັນຊາມາ” 36ອາໂຣນກັບລູກຊາຍທັງ-
ຫລາຍຂອງລາວໄດ້ເຮັດຕາມທີ່ພຣະຜູ້ເປັນເຈົ້າໄດ້ຊົງສັ່ງທາງໂມເຊທຸກປະການ

# ບົດທີ 9

## ການເລີ້ມຕົ້ນບົວລະບັດຂອງພວກປະໂລຫິດ

1ຕໍ່ມາໃນມື້ທີແປດ ໂມເຊໄດ້ບອກອາໂຣນ ແລະລູກຊາຍທັງຫລາຍຂອງລາວ ແລະພວກເຖົ້າ
ແກ່ຂອງອິສຣາເອນມາ 2ແລະລາວໄດ້ກ່າວແກ່ອາໂຣນວ່າ “ຈົ່ງເອົາລູກງົວໂຕໜຶ່ງເປັນເຄື່ອງບູ-
ຊາໄຖ່ບາບ ແລະແກະຜູ້ໂຕໜຶ່ງເປັນເຄື່ອງເຜົາບູຊາ ທັງສອງໂຕໃຫ້ເລືອກເອົາໂຕທີ່ດີທີ່ສຸດ ຈົ່ງ
ຖວາຍບູຊາຕໍ່ພຣະພັກພຣະຜູ້ເປັນເຈົ້າ 3ແລະກ່າວແກ່ຄົນອິສຣາເອນວ່າ ‘ຈົ່ງເອົາລູກແບ້ຜູ້ໂຕ
ໜຶ່ງເປັນເຄື່ອງບູຊາໄຖ່ບາບ ແລະລູກງົວໂຕໜຶ່ງກັບລູກແກະໂຕໜຶ່ງ ທັງສອງໃຫ້ມີອາຍຸໜຶ່ງປີ ຄື
ໂຕທີ່ດີທີ່ສຸດເປັນເຄື່ອງເຜົາບູຊາ 4ແລະເອົາງົວເຖິກໜຶ່ງໂຕ ແລະແກະຜູ້ໜຶ່ງໂຕເປັນເຄື່ອງບູຊາ
ຂອບພຣະຄຸນຖວາຍຕໍ່ພຣະພັກພຣະຜູ້ເປັນເຈົ້າ ແລະເອົາພືດຜົນເປັນເມັດນວດດ້ວຍນໍ້າມັນມາ
ຖວາຍ ເພາະວ່າພຣະຜູ້ເປັນເຈົ້າຈະໄດ້ປະກົດແກ່ທ່ານໃນມື້ນີ້’” 5ພວກເຂົາທັງຫລາຍກໍເອົາສິ່ງ
ທີ່ໂມເຊສັ່ງນັ້ນມາທີ່ໜ້າຫໍເຕັນແຫ່ງຊຸມນຸມ ແລະຊຸມນຸມຊົນທັງໝົດກໍເຂົ້າມາໃກ້ ຢືນຢູ່ຕໍ່ພຣະພັກ
ພຣະຜູ້ເປັນເຈົ້າ 6ໂມເຊກ່າວວ່າ “ອັນນີ້ແມ່ນສິ່ງຊຶ່ງພຣະຜູ້ເປັນເຈົ້າໄດ້ສັ່ງໃຫ້ທ່ານທັງຫລາຍ
ເຮັດ ແລະສະຫງ່າລາສີຂອງພຣະຜູ້ເປັນເຈົ້າຈະປະກົດແກ່ທ່ານທັງຫລາຍ” 7ແລ້ວໂມເຊຈຶ່ງສັ່ງ
ອາໂຣນວ່າ “ຈົ່ງຫຍັບເຂົ້າໄປໃກ້ແທ່ນບູຊາຖວາຍເຄື່ອງບູຊາໄຖ່ບາບ ແລະເຄື່ອງເຜົາບູຊາຂອງ
ທ່ານເອງ ແລະເຮັດການໄຖ່ໂທດບາບຂອງຕົວທ່ານກັບໄພ່ພົນທັງຫລາຍ ແລະຈົ່ງເອົາເຄື່ອງ
ຖວາຍບູຊາຂອງໄພ່ພົນມາ ແລະເຮັດການໄຖ່ບາບຂອງພວກເຂົາ ດັ່ງທີ່ພຣະຜູ້ເປັນເຈົ້າໄດ້ສັ່ງ
ໄວ້’”

8ອາໂຣນຈຶ່ງຫຍັບເຂົ້າໄປໃກ້ແທ່ນບູຊາ ແລະຂ້າລູກງົວເປັນເຄື່ອງບູຊາໄຖ່ບາບຂອງຕົນ
9ແລະລູກຊາຍອາໂຣນກໍເອົາເລືອດມາໃຫ້ລາວ ລາວກໍເອົານິ້ວມືຈຸ່ມເລືອດໄປເຈີມຈອມຂອງ
ແທ່ນບູຊາ ແລະຖອກເລືອດລົງໃສ່ຕີນແທ່ນບູຊາ 10ສ່ວນໄຂມັນ ແລະໝາກໄຂ່ຫລັງ ກັບໜັງ
ບາງໆເທິງຕັບຈາກເຄື່ອງບູຊາໄຖ່ບາບນັ້ນ ພວກເຂົາເຜົາເທິງແທ່ນບູຊາ ດັ່ງທີ່ພຣະຜູ້ເປັນເຈົ້າ
ໄດ້ສັ່ງໂມເຊໄວ້ 11ລາວກໍເຜົາຊີ້ນ ແລະໜັງ ດ້ວຍໄຟຢູ່ພາຍນອກຄ້າຍ

12ພວກເຂົາຂ້າສັດເປັນເຄື່ອງເຜົາບູຊາແລ້ວລູກຊາຍອາໂຣນກໍເອົາເລືອດມາໃຫ້ລາວ ລາວຈຶ່ງ
ເອົາເລືອດນັ້ນມາຊິດໃສ່ແທ່ນ ແລະຮອບແທ່ນບູຊາ 13ລູກຊາຍທັງຫລາຍຂອງອາໂຣນກໍສົ່ງ
ເຄື່ອງເຜົາບູຊາເທື່ອລະຕ່ອນກັບຫົວມາໃຫ້ອາໂຣນ. ອາໂຣນເຜົາສິ່ງເຫລົ່ານີ້ເທິງແທ່ນບູຊາ
14ອາໂຣນໄດ້ລ້າງເຄື່ອງໃນ ຂາສັດ ແລະເຜົາເຄື່ອງເຜົາບູຊາເທິງແທ່ນບູຊາ

15ແລ້ວອາໂຣນກໍເອົາເຄື່ອງບູຊາຂອງໄພ່ພົນມາຖວາຍຄືເອົາແບ້ ຊຶ່ງເປັນເຄື່ອງບູຊາໄຖ່ບາບ
ຊຶ່ງເປັນຂອງໄພ່ພົນມາຂ້າບູຊາໄຖ່ບາບ ດັ່ງເຄື່ອງບູຊາໄຖ່ບາບເທື່ອກ່ອນນັ້ນ 16ແລະລາວກໍ
ຖວາຍເຄື່ອງເຜົາບູຊາອີກຕາມກົດລະບຽບທຸກຢ່າງ 17ລາວຖວາຍພືດຜົນເປັນເມັດໂດຍຈັບມາ
ກໍາມືໜຶ່ງເຜົາເທິງແທ່ນບູຊາ ນອກຈາກເຄື່ອງເຜົາ ບູຊາປະຈໍາຕອນເຊົ້າ 18ລາວຂ້າງົວເຖິກ

ແລະແກະຜູ້ເປັນເຄື່ອງບູຊາເພື່ອສາມັກຄີທຳສຳລັບໄພ່ພົນ ແລະລູກຊາຍອາໂຣນເອົາເລືອດມາ
ໃຫ້ອາໂຣນ ອາໂຣນກໍເອົາເລືອດມາຊິດໃສ່ແທ່ນແລະຮອບແທ່ນບູຊາ [19]ລາວເອົາໄຂມັນງົວ
ແລະໄຂມັນແກະ ກັບຫາງທີ່ເປັນໄຂມັນ ແລະໄຂມັນທີ່ຫຸ້ມເຄື່ອງໃນ ແລະໝາກໄຂ່ຫລັງກັບໜັງ
ບາງໆເທິງຕັບມາໃຫ້ [20]ພວກເຂົາທັງຫລາຍວາງໄຂມັນໄວ້ເທິງຊິ້ນເອິກ ແລະອາໂຣນກໍເຜົາໄຂ-
ມັນເທິງແທ່ນບູຊາ [21]ສ່ວນຊິ້ນໜ້າເອິກ ແລະຊິ້ນຂາເບື້ອງຂວານັ້ນ ອາໂຣນນຳມາເປັນເຄື່ອງບູ-
ຊາຖວາຍຕໍ່ພຣະພັກພຣະຜູ້ເປັນເຈົ້າ ດັ່ງທີ່ໂມເຊສັ່ງໄວ້

[22]ແລ້ວອາໂຣນຍົກມືຂຶ້ນອວຍພອນໄພ່ພົນ ແລະອາໂຣນກໍລົງມາຈາກການຖວາຍເຄື່ອງບູຊາ
ໄຖ່ບາບ ເຄື່ອງເຜົາບູຊາ ແລະພິດຜົນເປັນເມັດ [23]ໂມເຊກັບອາໂຣນຈຶ່ງເຂົ້າໄປໃນຫໍເຕັນແຫ່ງ
ຊຸມນຸມ ເມື່ອເຂົາທັງສອງອອກມາ ເຂົາກໍອວຍພອນໄພ່ພົນ ແລະສະຫງ່າລາສີຂອງພຣະຜູ້ເປັນ-
ເຈົ້າກໍປະກົດແກ່ໄພ່ພົນທັງປວງ [24]ມີແປວໄຟພຸ່ງອອກມາຕໍ່ພຣະພັກພຣະຜູ້ເປັນເຈົ້າ ເຜົາເຄື່ອງ
ເຜົາບູຊາ ແລະໄຂມັນຊຶ່ງຢູ່ເທິງແທ່ນບູຊາ ເມື່ອໄພ່ພົນທັງຫລາຍເຫັນກໍໂຫ່ຮ້ອງ ແລະກົ້ມໜ້າ
ລົງເຖິງດິນ

# ບົດທີ 10

## ນາດາບກັບອາບີຮູຖືກຂ້າເນື່ອງດ້ວຍໄຟທີ່ຕ້ອງຫ້າມ

[1]ຝ່າຍນາດາບກັບອາບີຮູລູກຊາຍຂອງອາໂຣນໄດ້ເອົາໝໍ້ຂາງໄຟຂອງພວກເຂົາມາແລະເອົາ
ໄຟໃສ່ໃນນັ້ນ ແລ້ວໃສ່ເຄື່ອງຫອມລົງ ແລະເອົາໄຟທີ່ຕ້ອງຫ້າມມາເຜົາຖວາຍບູຊາຕໍ່ພຣະພັກ
ພຣະຜູ້ເປັນເຈົ້າ ຊຶ່ງພຣະອົງບໍ່ໄດ້ບອກໃຫ້ພວກເຂົາເຮັດເຊັ່ນນັ້ນ [2]ໄຟກໍພຸ່ງຂຶ້ນມາຈາກພຣະຜູ້-
ເປັນເຈົ້າ ໄໝ້ພວກເຂົາທັງສອງ ເຂົາກໍຕາຍຕໍ່ພຣະພັກພຣະຜູ້ເປັນເຈົ້າ [3]ໂມເຊຈຶ່ງບອກອາໂຣນ
ວ່າ "ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ 'ເຮົາຈະສະແດງຄວາມບໍລິສຸດຂອງເຮົາທ່າມກາງຜູ້ທີ່ຢູ່ໃກ້
ເຮົາ ເຂົາຈະຖວາຍສະຫງ່າລາສີແດ່ເຮົາຕໍ່ໜ້າໄພ່ພົນທັງປວງ'" ແລະອາໂຣນກໍມິດງຽບຢູ່ [4]ໂມ-
ເຊໄດ້ບອກມີຊາເອນແລະເອນຊາຟັນ ລູກຊາຍຂອງອຸດຊີເອນ ລຸງຂອງອາໂຣນວ່າ "ຈົ່ງ
ຫຍັບເຂົ້າມາໃກ້ ຫາມເອົາພີ່ນ້ອງຂອງເຈົ້າອອກໄປນອກຄ້າຍຈາກໜ້າສະຖານທີ່ບໍລິສຸດ" [5]ພວກ
ເຂົາກໍເຂົ້າມາໃກ້ ຫາມສົບ ທັງເສື້ອອອກໄປໄວ້ນອກຄ້າຍຕາມທີ່ໂມເຊສັ່ງ [6]ໂມເຊກ່າວແກ່ອາ-
ໂຣນແລະເອເລອາຊາແລະອີທາມາ ລູກຊາຍອາໂຣນວ່າ "ທ່ານທັງຫລາຍຢ່າປົດໝວກ ຫລື
ຈີກເສື້ອຜ້າຂອງທ່ານ ຢ້ານວ່າທ່ານຈະຕ້ອງຕາຍ ແລະເພື່ອວ່າພຣະພິໂລດຈະບໍ່ຕົກໃສ່ຊຸມນຸມ-
ຊົນທັງໝົດ ແຕ່ພີ່ນ້ອງຂອງທ່ານຄືເຊື້ອສາຍອິສຣາເອນທັງປວງ ຈະໄວ້ທຸກ ເພາະພຣະຜູ້ເປັນ-
ເຈົ້າໄດ້ໃຫ້ບັງເກີດການເຜົາໄໝ້ [7]ແລະຢ່າອອກໄປຈາກປະຕູຫໍເຕັນແຫ່ງຊຸມນຸມຢ້ານວ່າທ່ານຈະ
ຕ້ອງຕາຍ ເພາະວ່ານໍ້າມັນເຈີມແຫ່ງພຣະຜູ້ເປັນເຈົ້າຢູ່ເທິງທ່ານທັງຫລາຍ" ພວກເຂົາທັງຫລາຍ
ກໍເຮັດຕາມຄຳເວົ້າຂອງໂມເຊ

## ກົດລະບຽບສຳລັບພວກປະໂລຫິດ

[8]ພຣະຜູ້ເປັນເຈົ້າກ່າວກັບອາໂຣນວ່າ, [9]"ເມື່ອເຈົ້າ ຫລືລູກຊາຍຂອງເຈົ້າຈະເຂົ້າໄປໃນຫໍເຕັນ
ແຫ່ງຊຸມນຸມ ຢ່າດື່ມເຫລົ້າອະງຸ່ນ ຫລືເຫລົ້າ ຢ້ານວ່າເຈົ້າຈະຕ້ອງຕາຍ ທັງນີ້ໃຫ້ເປັນກົດເກນ

ຖາວອນຢູ່ຕະຫລອດຊົ່ວອາຍຸຂອງພວກເຈົ້າ 10ເຈົ້າຈົ່ງແຍກຂອງບໍລິສຸດຈາກຂອງບໍ່ບໍລິສຸດແລະ
ຂອງທີ່ມີມົນທິນຈາກຂອງທີ່ບໍ່ມີມົນທິນ 11ເຈົ້າຈະຕ້ອງສອນໄພ່ພົນອິສຣາເອນໃຫ້ຮູ້ເຖິງກົດເກນ
ທັງປວງ ຊຶ່ງພຣະຜູ້ເປັນເຈົ້າໄດ້ກ່າວແກ່ພວກເຂົາທັງຫລາຍທາງໂມເຊ”

12ໂມເຊກ່າວແກ່ອາໂຣນ ແລະ ເອເລອາຊາ ແລະ ອີທາມາລູກຊາຍຂອງລາວຜູ້ທີ່ເຫລືອຢູ່ວ່າ
“ຈົ່ງເອົາພືດຜົນເປັນເມັດຊຶ່ງເຫລືອຈາກການບູຊາດ້ວຍໄຟຖວາຍແດ່ພຣະຜູ້ເປັນເຈົ້າ ມາກິນຢູ່
ຂ້າງແທ່ນບູຊາ ເປັນເຂົ້າຈີ່ບໍ່ມີເຊື້ອແປ້ງ ເພາະເປັນຂອງບໍລິສຸດທີ່ສຸດ 13ທ່ານຈົ່ງກິນໃນບ່ອນບໍ-
ລິສຸດເພາະເປັນສ່ວນຂອງທ່ານ ແລະສ່ວນຂອງລູກຊາຍຂອງທ່ານຈາກເຄື່ອງບູຊາດ້ວຍໄຟ
ຖວາຍແດ່ພຣະຜູ້ເປັນເຈົ້າ ເພາະຂ້າພະເຈົ້າໄດ້ຮັບບັນຊາດັ່ງນີ້ 14ແຕ່ຊີ້ນໜ້າເອິກທີ່ແກວ່ງ
ຖວາຍ ແລະຊີ້ນຂາທີ່ຖວາຍແລ້ວນັ້ນ ທ່ານຈົ່ງກິນໃນບ່ອນທີ່ສະອາດ ທັງຕົວທ່ານແລະລູກຊາຍ
ລູກສາວຂອງທ່ານກໍກິນໄດ້ ເພາະເປັນສ່ວນທີ່ໄດ້ມາຈາກເຄື່ອງບູຊາຂອບພຣະຄຸນຂອງຄົນອິ-
ສຣາເອນອັນຕົກເປັນຂອງທ່ານ ທັງລູກຊາຍທັງຫລາຍຂອງທ່ານດ້ວຍ 15ຊີ້ນຂາ ແລະຊີ້ນໜ້າ
ເອິກທີ່ຖວາຍ ພວກເຂົາຈະເອົາມາບູຊາພ້ອມກັບເຄື່ອງໄຂມັນທີ່ບູຊາດ້ວຍໄຟ ເພື່ອເປັນເຄື່ອງບູ-
ຊາຖວາຍຕໍ່ພຣະພັກພຣະຜູ້ເປັນເຈົ້າ ສິ່ງເຫລົ່ານີ້ເປັນຂອງທ່ານແລະລູກຊາຍທັງຫລາຍຂອງ
ທ່ານ ໃຫ້ເປັນກົດເກນອັນຕະຫລອດໄປເປັນນິດ ດັ່ງທີ່ພຣະຜູ້ເປັນເຈົ້າໄດ້ບັນຊາໄວ້”

16ຝ່າຍໂມເຊໄດ້ພະຍາຍາມຖາມເຖິງເລື່ອງແບ້ຊຶ່ງເປັນເຄື່ອງບູຊາໄຖ່ບາບ ແລະເບິ່ງແມ ແບ້
ໂຕນັ້ນຖືກເຜົາແລ້ວ ໂມເຊຈຶ່ງຮ້າຍເອເລອາຊາ ແລະ ອີທາມາລູກຊາຍຂອງອາໂຣນທີ່ເຫລືອຢູ່
ໂດຍເວົ້າກັບພວກເຂົາວ່າ 17“ເຫດໃດທ່ານຈຶ່ງບໍ່ໄດ້ກິນເຄື່ອງບູຊາໄຖ່ບາບໃນບ່ອນບໍລິສຸດ ໃນ
ເມື່ອເປັນຂອງບໍລິສຸດທີ່ສຸດ ແລະພຣະເຈົ້າໄດ້ປະທານຂອງເຫລົ່ານັ້ນໃຫ້ແກ່ທ່ານເພື່ອທ່ານຈະ
ໄດ້ຍົກຄວາມບາບຂອງຊຸມນຸມຊົນ ເພື່ອເຮັດການໄຖ່ໂທດບາບຂອງພວກເຂົາທັງຫລາຍຕໍ່ພຣະ-
ພັກພຣະຜູ້ເປັນເຈົ້າ 18ເບິ່ງແມ ເລືອດສັດນັ້ນກໍບໍ່ໄດ້ເອົາເຂົ້າໄປໃນບ່ອນບໍລິສຸດທີ່ຫ້ອງຊັ້ນໃນ
ທ່ານຄວນຈະກິນສິ່ງເຫລົ່ານີ້ໃນບ່ອນບໍລິສຸດ ດັ່ງທີ່ຂ້າພະເຈົ້າໄດ້ສັ່ງໄວ້ແລ້ວນັ້ນ” 19ອາໂຣນຈຶ່ງ
ກ່າວແກ່ໂມເຊວ່າ “ເບິ່ງແມ ມື້ນີ້ພວກເຂົາໄດ້ຖວາຍເຄື່ອງບູຊາໄຖ່ບາບ ແລະເຄື່ອງເຜົາບູຊາ
ຂອງພວກເຂົາຕໍ່ພຣະພັກພຣະຜູ້ເປັນເຈົ້າແລ້ວ ແລະເຫດການເຫລົ່ານີ້ ກໍຕົກຖືກຂ້າພະເຈົ້າ ຖ້າ
ມື້ນີ້ຂ້າພະເຈົ້າໄດ້ກິນເຄື່ອງບູຊາໄຖ່ບາບ ຈະເປັນທີ່ພໍພຣະໄທໃນສາຍພຣະເນດຂອງພຣະຜູ້-
ເປັນເຈົ້າໄດ້ຫລື” 20ເມື່ອໂມເຊໄດ້ຟັງດັ່ງນັ້ນ ທ່ານກໍພໍໃຈ

# ບົດທີ 11

## ບັນຍັດຕ່າງໆເລື່ອງອາຫານ

1ພຣະຜູ້ເປັນເຈົ້າກ່າວກັບໂມເຊແລະອາໂຣນວ່າ 2“ຈົ່ງກ່າວແກ່ຄົນອິສຣາເອນວ່າ ຕໍ່ໄປນີ້
ເປັນສັດທີ່ມີຊີວິດໃນບັນດາສັດໃນໂລກຊຶ່ງເຈົ້າຈະກິນໄດ້ 3ບັນດາສັດທີ່ຄ້ຽວເອື້ອງ ແລະມີເລັບ
ແຍກກີບ ແລະຕີນແຍກເປັນສອງກີບ ເຈົ້າກິນໄດ້ 4ຢ່າງໃດກໍຕາມ ສັດຕໍ່ໄປນີ້ທີ່ຄ້ຽວເອື້ອງ ຫລື
ທີ່ມີເລັບແຍກກີບ ເຈົ້າຢ່າກິນ ອູດ ເພາະມັນຄ້ຽວເອື້ອງແຕ່ບໍ່ແຍກກີບ ເປັນສັດທີ່ມີມົນທິນແກ່
ເຈົ້າ 5ໂຕຕຸ່ນ ເພາະວ່າມັນເປັນສັດຄ້ຽວເອື້ອງແຕ່ບໍ່ແຍກກີບ ເປັນສັດທີ່ມີມົນທິນແກ່ເຈົ້າ 6ແລະ

ໂຕກະຕ່າຍ ເພາະວ່າມັນເປັນສັດຄ້ຽວເອື້ອງແຕ່ບໍ່ແຍກກີບ ເປັນສັດທີ່ມີມົນທິນແກ່ເຈົ້າ [7]ແລະ
ໂຕໝູ ເພາະມັນເປັນສັດແຍກກີບ ແລະມີກີບຜ່າແຕ່ບໍ່ຄ້ຽວເອື້ອງ ຈຶ່ງເປັນສັດທີ່ມີມົນທິນແກ່ເຈົ້າ
[8]ຢ່າກິນຊີ້ນຂອງສັດເຫລົ່ານີ້ ແລະເຈົ້າຢ່າແຕະຕ້ອງຊາກຂອງມັນ ມັນເປັນຂອງທີ່ມີມົນທິນແກ່
ເຈົ້າ

[9]ສັດທີ່ຢູ່ໃນນ້ຳທັງໝົດເຫລົ່ານີ້ເຈົ້າກິນໄດ້ ຂອງທຸກຢ່າງຊຶ່ງຢູ່ໃນນ້ຳທີ່ມີຄີ ແລະມີເກັດ ຈະຢູ່
ໃນທະເລ ຫລືໃນແມ່ນ້ຳກໍຕາມ ເຈົ້າກິນໄດ້ [10]ແຕ່ຂອງທຸກຢ່າງຊຶ່ງຢູ່ໃນທະເລ ແມ່ນ້ຳ ຂອງທຸກ
ຢ່າງທີ່ເຄື່ອນໄຫວໃນນ້ຳ ແລະສິ່ງມີຊີວິດທຸກຢ່າງຊຶ່ງຢູ່ໃນນ້ຳ ບໍ່ມີຄີປາ ແລະເກັດ ເປັນສັດທີ່
ໜ້າກຽດຊັງແກ່ເຈົ້າ [11]ໃຫ້ເປັນສັດທີ່ໜ້າກຽດຊັງແກ່ເຈົ້າ ຊີ້ນມັນກໍດີເຈົ້າຢ່າກິນ ແລະຊາກສົບ
ຂອງມັນກໍເປັນໜ້າກຽດຊັງສຳລັບເຈົ້າ [12]ຂອງທຸກຢ່າງຊຶ່ງຢູ່ໃນນ້ຳບໍ່ມີຄີ ແລະເກັດ ເປັນໜ້າກຽດ
ຊັງແກ່ເຈົ້າ

[13]ຕໍ່ໄປນີ້ເປັນນົກຊຶ່ງເຈົ້າຖືວ່າເປັນສິ່ງທີ່ໜ້າກຽດຊັງ ເຈົ້າຢ່າກິນ ຄືນົກອິນຊີ ນົກແຮ້ງ ນົກກາ
ດຳ [14]ນົກອິນຊີຫາງຍາວ ນົກອິນຊີດຳຕາມຊະນິດຂອງມັນ [15]ນົກແຫລວຕາມຊະນິດຂອງມັນ
[16]ນົກເຄົ້າແມວ ນົກເຄົ້າໂມງ ນົກນາງນວນ ນົກອິນຊີ ນົກເຂົາຕາມຊະນິດຂອງມັນ [17]ນົກເຄົ້າ
ນ້ອຍ ນົກການ້ຳ ນົກເຄົ້າໃຫຍ່ [18]ນົກອໍຫລໍ ນົກກະທຸງ ນົກແລ້ງ [19]ນົກກະສາດຳ ນົກກະສາ
ຕາມຊະນິດຂອງມັນ ນົກຫົວຂວານ ແລະເຈຍ

[20]ແມງໄມ້ມີປີກຊຶ່ງຄານສີ່ຂາ ເປັນສັດທີ່ໜ້າກຽດຊັງສຳລັບເຈົ້າ [21]ແຕ່ໃນບັນດາແມງໄມ້ມີປີກ
ທີ່ຄານສີ່ຂານີ້ ເຈົ້າຈະກິນຈຳພວກທີ່ມີຂາພັບໃຊ້ເຕັ້ນໄປເທິງດິນໄດ້ [22]ໃນຈຳພວກແມງໄມ້ຕໍ່ໄປນີ້
ເຈົ້າກິນໄດ້ ຕັກແຕນຕາມຊະນິດຂອງມັນ ຈິຫລໍ່ຕາມຊະນິດຂອງມັນ ຈັກຈັ່ນຕາມຊະນິດຂອງ
ມັນ [23]ແຕ່ແມງໄມ້ມີປີກບິນໄດ້ຊຶ່ງມີສີ່ຂາ ເປັນສັດທີ່ໜ້າກຽດຊັງແກ່ເຈົ້າ

[24]ສິ່ງເຫລົ່ານັ້ນຈະເຮັດໃຫ້ເຈົ້າມີມົນທິນໄດ້ຄືຜູ້ໜຶ່ງຜູ້ໃດແຕະຕ້ອງຊາກສົບຂອງມັນຈະຕ້ອງມີ
ມົນທິນໄປຮອດຕອນແລງ [25]ຜູ້ໃດຖືຊາກສັດສ່ວນໃດໆໄປ ຕ້ອງຊັກເສື້ອຜ້າຂອງຕົນ ແລະເປັນ
ມົນທິນໄປຈົນຮອດຕອນແລງ

[26]ຊາກສົບຂອງສັດທັງປວງທີ່ແຍກກີບ ແລະບໍ່ມີກີບຜ່າ ບໍ່ຄ້ຽວເອື້ອງເປັນສັດທີ່ມີມົນທິນແກ່
ເຈົ້າ ຜູ້ໃດແຕະຕ້ອງສັດເຫລົ່ານີ້ຈະມີມົນທິນ [27]ໃນບັນດາສັດສີ່ຕີນທຸກຢ່າງຊຶ່ງໄຕ່ໄປດ້ວຍຝາຕີນ
ເປັນສັດມີມົນທິນແກ່ເຈົ້າ ຜູ້ໃດແຕະຕ້ອງຊາກສັດນີ້ຈະຕ້ອງເປັນມົນທິນໄປຮອດຕອນແລງ [28]ຜູ້
ໃດເອົາຊາກສົບໄປຈະຕ້ອງຊັກເສື້ອຜ້າຂອງຕົນ ແລະມີມົນທິນໄປຈົນຮອດຕອນແລງ

[29]ໃນບັນດາສັດທີ່ເລືອຄານໄປເທິງດິນ ຊະນິດຕໍ່ໄປນີ້ເປັນສັດທີ່ມີມົນທິນແກ່ເຈົ້າ ຄື ເຫງັນ
ໜູ ກັບແກ້ຕາມຊະນິດຂອງມັນ [30]ຂີ້ກ້ຽມ ເຕົ່າ ກົບ ແຍ້ ແມງລີ້ນໝາ ແລະກະປອມ [31]ໃນບັນ-
ດາສັດເລືອຄານ ຊະນິດເຫລົ່ານີ້ເປັນມົນທິນແກ່ເຈົ້າ ຜູ້ໃດແຕະຕ້ອງເມື່ອມັນຕາຍແລ້ວ ຜູ້ນັ້ນຈະ
ເປັນມົນທິນໄປຮອດຕອນແລງ [32]ແລະເມື່ອມັນຕາຍຕົກຖືກສິ່ງໃດ ສິ່ງນັ້ນກໍເປັນມົນທິນ ບໍ່ວ່າ
ຈະເປັນໄມ້ ຫລືເສື້ອຜ້າ ຫລືໜັງສັດ ຫລືກະສອບ ຫລືພາຊະນະໃດໆທີ່ໃຊ້ເພື່ອປະໂຫຍດຢ່າງ-
ໃດ ຈະຕ້ອງແຊ່ນ້ຳ ແລະຈະເປັນມົນທິນໄປຈົນຮອດຕອນແລງ ຕໍ່ໄປກໍຖືວ່າສະອາດໄດ້ [33]ແລະ
ຖ້າມັນຕົກລົງໄປໃນພາຊະນະດິນ ສິ່ງທີ່ຢູ່ໃນພາຊະນະນັ້ນຈະເປັນມົນທິນ ຈົ່ງຕີພາຊະນະນັ້ນ

ຖິ້ມເສຍ 34ຖ້ານ້ຳຖືກອາຫານໃດໜຶ່ງ ອາຫານໃນພາຊະນະນັ້ນກໍເປັນມົນທິນ ແລະນ້ຳດື່ມໝົດ
ທຸກຢ່າງຊຶ່ງຈະດື່ມໄດ້ຈາກພາຊະນະນີ້ກໍຈະເປັນມົນທິນດ້ວຍ 35ຖ້າສ່ວນໃດຂອງຊາກສັດຕົກໃສ່
ສິ່ງໃດໆ ສິ່ງນັ້ນ ກໍເປັນມົນທິນ ບໍ່ວ່າເປັນເຕົາອົບ ຫລືເຕົາໄຟ ຕ້ອງມ້າງຖິ້ມ 36ຢ່າງໃດກໍຕາມ
ນ້ຳພຸ ຫລືນ້ຳໃນອ່າງເກັບນ້ຳເປັນຂອງສະອາດ ແຕ່ສິ່ງໃດທີ່ແຕະຕ້ອງຊາກສັດນັ້ນຈະເປັນມົນ-
ທິນ 37ຖ້າສ່ວນໃດຂອງຊາກສັດຕົກໃສ່ເມັດພືດທີ່ໃຊ້ຫວ່ານ ພືດນັ້ນຖືວ່າສະອາດ 38ຖ້າເອົາເມັດ
ພືດນັ້ນແຊ່ນ້ຳໄວ້ ແລະຊາກສັດສ່ວນໃດຕົກໃສ່ ນ້ຳນັ້ນກໍເປັນມົນທິນແກ່ເຈົ້າ

39ຖ້າສັດຊຶ່ງເຈົ້າຈະກິນໄດ້ນັ້ນຕາຍເອງ ຜູ້ທີ່ແຕະຕ້ອງຊາກສັດນັ້ນຈະເປັນມົນທິນໄປຈົນຮອດ
ຕອນແລງ 40ແລະຜູ້ໃດທີ່ກິນຊາກສັດນັ້ນຈະຕ້ອງຊັກເສື້ອຜ້າຂອງລາວ ແລະເປັນມົນທິນໄປຈົນ
ຮອດຕອນແລງ ຜູ້ໃດທີ່ຈັບຖືຊາກສັດນັ້ນໄປກໍຕ້ອງຊັກເສື້ອຜ້າຂອງຕົນ ແລະເປັນມົນທິນໄປຈົນ
ຮອດຕອນແລງ 41ບັນດາສັດເລືອຄານທີ່ເລືອໄປເທິງໜ້າດິນເປັນສິ່ງທີ່ໜ້າກຽດຊັງ ຢ່າກິນ 42ສິ່ງ
ໃດທີ່ເລືອໄປດ້ວຍທ້ອງ ຫລືສິ່ງທີ່ຍ່າງສີ່ຂາ ຫລືສິ່ງທີ່ມີຫລາຍຂາ ທຸກສິ່ງທີ່ຄານໄປເທິງໜ້າດິນ
ເຈົ້າຢ່າກິນ ເພາະເປັນສິ່ງໜ້າກຽດຊັງ 43ເຈົ້າຢ່າເຮັດໃຫ້ຕົວເອງເປັນທີ່ກຽດຊັງດ້ວຍສັດເລືອຄານ
ໃດໆ ຢ່າເຮັດຕົວໃຫ້ເປັນມົນທິນໄປດ້ວຍສັດເຫລົ່ານີ້ຢ້ານວ່າເຈົ້າຈະເປັນມົນທິນໄປນຳ 44ເພາະ
ເຮົາຄື**ພຣະຜູ້ເປັນເຈົ້າ**ພຣະເຈົ້າຂອງເຈົ້າ ຈົ່ງຊຳລະຕົວໄວ້ໃຫ້ບໍລິສຸດ ເພາະເຮົາບໍລິສຸດ ເຈົ້າຢ່າ
ເຮັດຕົວໃຫ້ເປັນມົນທິນໄປດ້ວຍສັດຢ່າງໃດຢ່າງໜຶ່ງຊຶ່ງຄານໄປເທິງໜ້າດິນ 45ເພາະເຮົາຄື**ພຣະ-
ຜູ້ເປັນເຈົ້າ**ຜູ້ເອົາເຈົ້າອອກຈາກແຜ່ນດິນເອຢິບ ເພື່ອເປັນພຣະເຈົ້າຂອງເຈົ້າ ເພາະສະນັ້ນເຈົ້າ
ຈຶ່ງຕ້ອງບໍລິສຸດ ເພາະເຮົາບໍລິສຸດ" 46ສິ່ງເຫລົ່ານີ້ເປັນພຣະບັນຍັດກ່າວເຖິງເລື່ອງສັດ ແລະນົກ
ແລະສິ່ງມີຊີວິດທີ່ເຄື່ອນໄຫວໄປມາໃນນ້ຳ ແລະສັດທຸກຊະນິດທີ່ເລືອຄານເທິງໜ້າດິນ 47ເພື່ອໃຫ້
ສັງເກດຄວາມແຕກຕ່າງລະຫວ່າງສິ່ງທີ່ເປັນມົນທິນ ແລະສິ່ງທີ່ບໍ່ເປັນມົນທິນ ແລະລະຫວ່າງສັດ
ມີຊີວິດທີ່ກິນໄດ້ ແລະສັດມີຊີວິດທີ່ກິນບໍ່ໄດ້

# ບົດທີ 12

## ການເກີດລູກ ແລະການເປັນມົນທິນ

1**ພຣະຜູ້ເປັນເຈົ້າ**ກ່າວກັບໂມເຊວ່າ 2"ຈົ່ງກ່າວແກ່ຄົນອິສຣາເອນວ່າ ຖ້າຍິງຄົນໃດເປັນແມ່
ມານເກີດລູກເປັນຊາຍ ນາງຕ້ອງເປັນມົນທິນເຈັດມື້ ນາງຈະເປັນມົນທິນຢ່າງດຽວກັບເປັນມົນ-
ທິນເວລາທີ່ນາງມີປະຈຳເດືອນ 3ໃນມື້ທີ່ແປດໃຫ້ຕັດໜັງປາຍຂອງອະໄວຍະວະເພດຂອງເດັກ-
ນ້ອຍເພື່ອເປັນການເຂົ້າພິທີຕັດ 4ໃຫ້ນາງລໍຖ້າຢູ່ອີກສາມສິບສາມມື້ດ້ວຍເລື່ອງເລືອດຊຳລະຂອງ
ນາງ ຢ່າໃຫ້ນາງແຕະຕ້ອງຂອງບໍລິສຸດອັນໃດ ຫລືເຂົ້າໄປໃນສະຖານທີ່ບໍລິສຸດ ຈົນກວ່າຈະຄົບ
ມື້ຊຳລະຂອງນາງ 5ແຕ່ຖ້ານາງເກີດລູກເປັນຍິງ ນາງຈະເປັນມົນທິນໄປສອງອາທິດ ແບບດຽວ
ກັນກັບການມີປະຈຳເດືອນ ແລະນາງຈະຕ້ອງລໍຖ້າຢູ່ຫົກສິບຫົກມື້ ດ້ວຍເລື່ອງເລືອດຊຳລະຂອງ
ນາງ

6ເມື່ອມື້ຊຳລະຕົວຂອງນາງຄົບແລ້ວ ບໍ່ວ່າກໍາລູກຊາຍຫລືລູກສາວ ໃຫ້ນາງໄປຫາປະໂລຫິດ
ທີ່ປະຕູຫໍເຕັນ ແຫ່ງຊຸມນຸມເອົາລູກແກະອາຍຸໜຶ່ງປີໂຕໜຶ່ງໄປເປັນເຄື່ອງເຜົາບູຊາ ແລະນົກກາງ-

ແກະໜຸ່ມໂຕໜຶ່ງ ຫລືນົກເຂົາໂຕໜຶ່ງເປັນເຄື່ອງບູຊາໄຖ່ບາບ 7ໃຫ້ປະໂລຫິດເອົາຖວາຍຕໍ່ພຣະພັກ
ພຣະຜູ້ເປັນເຈົ້າ ແລະເຮັດການໄຖ່ບາບໃຫ້ນາງ ແລ້ວນາງຈະສະອາດເລື່ອງເລືອດຕົກຂອງ
ນາງ ນີ້ແມ່ນພຣະບັນຍັດວ່າດ້ວຍເລື່ອງການເກີດລູກ ບໍ່ວ່າເປັນຊາຍ ຫລືຍິງ 8ແລະຖ້ານາງບໍ່
ສາມາດຫາລູກແກະໂຕໜຶ່ງໄດ້ກໍໃຫ້ນາງເອົານົກເຂົາສອງໂຕ ຫລືນົກກາງແກໜຸ່ມສອງໂຕ ໂຕ
ໜຶ່ງເປັນເຄື່ອງເຜົາບູຊາ ແລະອີກໂຕໜຶ່ງເປັນເຄື່ອງບູຊາໄຖ່ບາບ ແລະໃຫ້ປະໂລຫິດເຮັດການ
ໄຖ່ບາບໃຫ້ນາງ ແລ້ວນາງຈະສະອາດ”

# ບົດທີ 13

## ພະຍາດຂີ້ທູດ ແບບຢ່າງຂອງຄວາມບາບ

1ພຣະຜູ້ເປັນເຈົ້າກ່າວກັບໂມເຊແລະອາໂຣນວ່າ 2“ຖ້າຜູ້ໃດເກີດຕຸ່ມ ຫລືຂີ້ກ້ຽນ ຫລືດ່າງຂຶ້ນ
ທີ່ຜິວໜັງ ແລ້ວຜິວໜັງຂອງລາວເປັນພະຍາດຂີ້ທູດ ກໍໃຫ້ພາຜູ້ນັ້ນມາຫາອາໂຣນຜູ້ເປັນປະໂລ-
ຫິດ ຫລືມາຫາລູກຊາຍຄົນໜຶ່ງຄົນໃດຂອງລາວທີ່ເປັນປະໂລຫິດ 3ໃຫ້ປະໂລຫິດກວດຜິວໜັງ
ບ່ອນທີ່ເປັນພະຍາດ ຖ້າຂົນໃນທີ່ນັ້ນປ່ຽນເປັນສີຂາວ ແລະເຫັນວ່າພະຍາດນັ້ນຢູ່ເລິກກວ່າຜິວ-
ໜັງລົງໄປ ນັບວ່າເປັນພະຍາດຂີ້ທູດ ເມື່ອປະໂລຫິດກວດລາວສຳເລັດແລ້ວໃຫ້ປະກາດວ່າ
ລາວເປັນມົນທິນ

4ຖ້າຜິວໜັງບ່ອນທີ່ດ່າງຂຶ້ນນັ້ນຂາວ ແລະປະກົດວ່າກົນບໍ່ເລິກໄປກວ່າຜິວໜັງ ແລະຂົນໃນ
ບໍລິເວນນັ້ນກໍບໍ່ປ່ຽນເປັນສີຂາວ ໃຫ້ປະໂລຫິດກັກຕົວຜູ້ປ່ວຍໄວ້ເຈັດມື້ 5ແລະໃຫ້ປະໂລຫິດກວດ
ລາວອີກໃນມື້ທີ່ເຈັດ ຖ້າຕາມສາຍຕາຂອງລາວເຫັນວ່າ ພະຍາດຍັງມີຢູ່ ແຕ່ບໍ່ລາມອອກໄປໃນ
ຜິວໜັງ ກໍໃຫ້ປະໂລຫິດກັກຕົວລາວຕໍ່ໄປອີກເຈັດມື້ 6ເມື່ອຮອດມື້ທີ່ເຈັດໃຫ້ປະໂລຫິດກວດລາວ
ອີກເທື່ອໜຶ່ງ ຖ້າບໍລິເວນທີ່ປ່ວຍນັ້ນຈາງລົງ ແລະພະຍາດບໍ່ໄດ້ລາມອອກໄປໃນຜິວໜັງ ກໍໃຫ້
ປະໂລຫິດປະກາດວ່າ ລາວສະອາດແລ້ວ ລາວເປັນພະຍາດຂີ້ກ້ຽນເທົ່ານັ້ນ ໃຫ້ລາວຊັກເສື້ອຜ້າ
ແລ້ວລາວກໍຈະສະອາດໄດ້ 7ຖ້າຫາກວ່າຫລັງຈາກທີ່ລາວສະແດງຕົວແກ່ປະໂລຫິດເພື່ອຮັບການ
ຊຳລະແລ້ວປະກົດວ່າ ບໍລິເວນທີ່ເປັນຂີ້ກ້ຽນລາມອອກໄປໃນຜິວໜັງ ລາວຕ້ອງກັບໄປຫາປະ-
ໂລຫິດອີກເປັນເທື່ອທີສອງ 8ໃຫ້ປະໂລຫິດກວດເບິ່ງ ຖ້າບໍລິເວນຂີ້ກ້ຽນນັ້ນລາມອອກໄປໃນຜິວ-
ໜັງກໍໃຫ້ປະໂລຫິດປະກາດວ່າ ລາວເປັນມົນທິນ ລາວເປັນພະຍາດຂີ້ທູດ

9ຖ້າຜູ້ໃດເປັນພະຍາດຂີ້ທູດກໍໃຫ້ພາຜູ້ນັ້ນມາຫາປະໂລຫິດ 10ແລະໃຫ້ປະໂລຫິດກວດເບິ່ງ
ຮ່າງກາຍລາວ ຖ້າມີບໍລິເວນຕຸ່ມສີຂາວເກີດຂຶ້ນທີ່ຜິວໜັງ ຊຶ່ງເຮັດໃຫ້ຂົນບ່ອນນັ້ນປ່ຽນເປັນສີ-
ຂາວ ແລະມີຊີ້ນແຕກໃນຕຸ່ມນັ້ນ 11ສະແດງວ່າເປັນພະຍາດຂີ້ທູດຊ້ຳເຮື້ອທີ່ຜິວໜັງ ໃຫ້ປະໂລ-
ຫິດປະກາດວ່າລາວເປັນມົນທິນ ຢ່າກັກຕົວລາວໄວ້ ເພາະວ່າລາວເປັນມົນທິນ 12ຖ້າພະຍາດຂີ້-
ທູດນັ້ນລາມໄປຕາມຜິວໜັງຕາມທີ່ປະໂລຫິດເຫັນຄືປະກົດວ່າ ລາມໄປຕາມຜິວໜັງທົ່ວຮ່າງກາຍ
ຜູ້ປ່ວຍຕັ້ງແຕ່ ຫົວຈົນຮອດຕີນ 13ປະໂລຫິດຕ້ອງກວດເບິ່ງ ແລະຖ້າຂີ້ທູດນັ້ນແຜ່ໄປທົ່ວຮ່າງ-
ກາຍໃຫ້ປະໂລຫິດປະກາດວ່າລາວສະອາດດ້ວຍພະຍາດຂອງລາວແລ້ວຕົວຂອງລາວຂາວສະ-
ອາດ 14ຖ້າມີຊີ້ນແຕກເປັນບາດປາກົດຂຶ້ນມາເມື່ອໃດ ລາວກໍເປັນມົນທິນເມື່ອນັ້ນ 15ໃຫ້ປະໂລ-

ຫິດກວດເບິ່ງບ່ອນຊີ້ນທີ່ແຕກເປັນບາດ ແລະປະກາດວ່າລາວເປັນມົນທິນ ເພາະຊີ້ນທີ່ແຕກເປັນ
ບາດນັ້ນເຮັດໃຫ້ເປັນມົນທິນ ລາວເປັນພະຍາດຂີ້ທູດ [16]ຫລືຖ້າຊີ້ນທີ່ແຕກເປັນບາດນັ້ນປ່ຽນໄປ
ອີກກາຍເປັນສີຂາວ ໃຫ້ລາວມາຫາປະໂລຫິດ [17]ແລະໃຫ້ປະໂລຫິດກວດເບິ່ງລາວ ແລະຖ້າພະ-
ຍາດນັ້ນກາຍເປັນສີຂາວ ໃຫ້ປະໂລຫິດປະກາດວ່າ ຄົນທີ່ເປັນພະຍາດນັ້ນສະອາດ ລາວກໍສະ-
ອາດ

[18]ຖ້າຢູ່ຮ່າງກາຍຄືຜິວໜັງຂອງຄົນໃດມີບາດຊຶ່ງຫາຍດີແລ້ວ [19]ຖ້າບາດແຜນັ້ນມີຕຸ່ມສີຂາວຂຶ້ນ
ມາ ຫລືມີບ່ອນດ່າງຂຶ້ນເປັນສີແດງອ່ອນໆ ກໍໃຫ້ຜູ້ນັ້ນໄປສະແດງຕົວຕໍ່ປະໂລຫິດ [20]ແລະປະ-
ໂລຫິດຈະກວດເບິ່ງ ຖ້າບ່ອນເປັນນັ້ນເລິກກວ່າຜິວໜັງ ແລະຂົນຢູ່ບໍລິເວນນັ້ນປ່ຽນເປັນສີຂາວ
ໃຫ້ປະໂລຫິດປະກາດວ່າລາວເປັນມົນທິນ ພະຍາດນັ້ນເປັນພະຍາດຂີ້ທູດ ທີ່ໄດ້ເກີດຂຶ້ນໃນບາດ
ເກົ່າ [21]ແຕ່ຖ້າປະໂລຫິດກວດເບິ່ງ ແລະຂົນບ່ອນນັ້ນກໍບໍ່ປ່ຽນເປັນສີຂາວ ແລະເປັນບໍ່ເລິກກວ່າ
ຜິວໜັງ ແຕ່ຈາງໆ ໃຫ້ປະໂລຫິດກັກຕົວລາວໄວ້ເຈັດມື້ [22]ຖ້າພະຍາດນັ້ນລາມອອກໄປໃນຜິວ-
ໜັງ ກໍໃຫ້ປະໂລຫິດປະກາດວ່າລາວເປັນມົນທິນ ລາວເປັນພະຍາດແລ້ວ [23]ແຕ່ຖ້າບ່ອນດ່າງ
ຂຶ້ນນັ້ນບໍ່ແຜ່ລາມອອກໄປ ກໍເປັນແຕ່ພຽງບາດຂອງຝີ ໃຫ້ປະໂລຫິດປະກາດວ່າລາວສະອາດ

[24]ຫລືສ່ວນຂອງຮ່າງກາຍຄືຜິວໜັງຖືກໄຟໄໝ້ ແລະບາດບ່ອນນັ້ນເປັນບ່ອນດ່າງຂຶ້ນສີແດງ
ອ່ອນໆ ຫລືສີຂາວ [25]ໃຫ້ປະໂລຫິດກວດເບິ່ງ ແລະ ຖ້າຂົນໃນບໍລິເວນນັ້ນປ່ຽນເປັນສີຂາວ
ແລະປະກົດວ່າເປັນເລິກກວ່າຜິວໜັງ ກໍເປັນພະຍາດຂີ້ທູດ ທີ່ໄດ້ເກີດຂຶ້ນມາບ່ອນບາດໄຟໄໝ້
ແລະໃຫ້ປະໂລຫິດປະກາດວ່າລາວເປັນມົນທິນ ລາວເປັນພະຍາດຂີ້ທູດ [26]ແຕ່ຖ້າປະໂລຫິດ
ກວດເບິ່ງ ແລະ ຂົນໃນບ່ອນດ່າງຂຶ້ນນັ້ນບໍ່ປ່ຽນເປັນສີຂາວ ແລະເປັນບໍ່ເລິກກວ່າຜິວໜັງ ແຕ່
ຈາງໆ ໃຫ້ປະໂລຫິດກັກຕົວລາວໄວ້ເຈັດມື້ [27]ເມື່ອຮອດມື້ທີເຈັດກໍໃຫ້ປະໂລຫິດກວດເບິ່ງລາວ
ຖ້າບ່ອນທີ່ເປັນນັ້ນລາມອອກໄປໃນຜິວໜັງ ກໍໃຫ້ປະໂລຫິດປະກາດວ່າລາວເປັນມົນທິນ ລາວ
ເປັນພະຍາດຂີ້ທູດ [28]ຖ້າບ່ອນທີ່ດ່າງຂຶ້ນນັ້ນ ບໍ່ແຜ່ລາມອອກໄປໃນຜິວໜັງ ແຕ່ເປັນຕຸ່ມຈາງໆ
ເພາະໄຟໄໝ້ ໃຫ້ປະໂລຫິດປະກາດວ່າລາວສະອາດ ເພາະມັນເປັນພຽງບາດຂອງໄຟໄໝ້

[29]ຖ້າຊາຍ ຫລືຍິງຄົນໃດມີພະຍາດທີ່ຫົວ ຫລືໜວດ [30]ໃຫ້ປະໂລຫິດກວດເບິ່ງພະຍາດນັ້ນ
ແລະ ຖ້າເປັນເລິກກວ່າຜິວໜັງ ແລະຜົມທີ່ນັ້ນເຫລືອງ ແລະບາງ ໃຫ້ປະໂລຫິດປະກາດວ່າ
ລາວເປັນມົນທິນ ລາວເປັນພະຍາດຂີ້ກາກ ເປັນພະຍາດຂີ້ທູດທີ່ຫົວ ຫລືໜວດ [31]ແລະຖ້າປະ-
ໂລຫິດກວດເບິ່ງພະຍາດຂີ້ກາກນັ້ນ ແລະ ເປັນບໍ່ເລິກກວ່າຜິວໜັງ ແລະບໍ່ມີຜົມດຳຢູ່ໃນບໍລິເວນ
ນັ້ນ ໃຫ້ປະໂລຫິດກັກຕົວຄົນທີ່ເປັນພະຍາດຂີ້ກາກນັ້ນໄວ້ເຈັດມື້ [32]ເມື່ອຮອດມື້ທີເຈັດກໍໃຫ້ປະ-
ໂລຫິດກວດພະຍາດນັ້ນ ຖ້າຂີ້ກາກບໍ່ລາມອອກໄປ ແລະບໍ່ມີຂົນເຫລືອງໃນບໍລິເວນນັ້ນ ແລະ
ປະກົດວ່າຂີ້ກາກບໍ່ເລິກກວ່າຜິວໜັງ [33]ກໍໃຫ້ຄົນນັ້ນແຖຜົມ ແຕ່ຢ່າແຖບໍລິເວນບ່ອນຂີ້ກາກ ໃຫ້
ປະໂລຫິດກັກຕົວຄົນທີ່ເປັນພະຍາດຂີ້ກາກນັ້ນໄວ້ອີກເຈັດມື້ [34]ເມື່ອຮອດມື້ທີເຈັດກໍໃຫ້ປະໂລຫິດ
ກວດເບິ່ງບ່ອນທີ່ເປັນຂີ້ກາກ ຖ້າບ່ອນເປັນຂີ້ກາກບໍ່ລາມອອກໄປໃນຜິວໜັງ ແລະປະກົດວ່າເປັນ
ບໍ່ເລິກໄປກວ່າຜິວໜັງ ໃຫ້ປະໂລຫິດປະກາດວ່າລາວສະອາດ ໃຫ້ລາວຊັກເສື້ອຜ້າ ແລ້ວຈະສະ-
ອາດ [35]ແຕ່ຖ້າລາວຊຳລະຕົວແລ້ວ ຍັງປະກົດວ່າພະຍາດຂີ້ກາກນັ້ນລາມອອກໄປໃນຜິວໜັງ

36ກໍໃຫ້ປະໂລຫິດກວດເບິ່ງລາວ ແລະ ຖ້າພະຍາດຂີ້ກາກລາມອອກໄປໃນຜິວໜັງແລ້ວ ປະໂລ-
ຫິດບໍ່ຈຳເປັນຕ້ອງເບິ່ງຫາຂົນສີເຫລືອງ ລາວເປັນມົນທິນແລ້ວ 37ແຕ່ຖ້າຕາມສາຍຕາຂອງລາວ
ພະຍາດຂີ້ກາກນັ້ນເຊົາແລ້ວ ແລະມີຜົມດຳເລີກຢູ່ໃນບໍລິເວນນັ້ນ ພະຍາດຂີ້ກາກກໍຫາຍແລ້ວ
ລາວກໍສະອາດ ແລະໃຫ້ປະໂລຫິດປະກາດວ່າ ລາວສະອາດ

38ເມື່ອຜູ້ຊາຍ ຫລືຜູ້ຍິງມີບ່ອນດ່າງຂຶ້ນທີ່ຜິວໜັງ ຄືບ່ອນດ່າງຂຶ້ນສີຂາວ 39ໃຫ້ປະໂລຫິດ
ກວດເບິ່ງລາວ ຖ້າບ່ອນດ່າງຂຶ້ນທີ່ຜິວກາຍນັ້ນເປັນສີຂາວໝົ່ນ ນັ້ນແມ່ນຂີ້ກ້ຽນທີ່ເກີດຂຶ້ນໃນຜິວ-
ໜັງ ລາວກໍສະອາດ

40ຖ້າຊາຍຄົນໃດມີຜົມຫລົ່ນຈາກຫົວ ລາວເປັນຄົນຫົວລ້ານ ແຕ່ລາວສະອາດ 41ຖ້າຊາຍຄົນ
ໃດມີຜົມຫລົ່ນທີ່ໜ້າຜາກ ແລະບ່ອນຂະມັບຫລົ່ນ ໜ້າຜາກຂອງເຂົາລ້ານ ແຕ່ລາວສະອາດ
42ແຕ່ຖ້າບໍລິເວນຫົວລ້ານ ຫລືໜ້າຜາກ ມີບໍລິເວນເປັນພະຍາດສີແດງອ່ອນໆ ລາວເປັນຂີ້ທູດ
ຂຶ້ນທີ່ຫົວລ້ານ ຫລືທີ່ໜ້າຜາກ 43ໃຫ້ປະໂລຫິດກວດເບິ່ງລາວ ຖ້າພະຍາດຕຸ່ມສີແດງອ່ອນໆຢູ່
ບ່ອນຫົວລ້ານ ຫລືທີ່ໜ້າຜາກຂອງລາວຄືກັບພະຍາດຂີ້ທູດທີ່ປະກົດຕາມຜິວໜັງ 44ຊາຍຜູ້ນັ້ນ
ເປັນພະຍາດຂີ້ທູດ ລາວເປັນມົນທິນ ປະໂລຫິດຕ້ອງປະກາດວ່າ ລາວເປັນມົນທິນຍ້ອນພະຍາດ
ຢູ່ຫົວຂອງລາວ

45ໃຫ້ບຸກຄົນທີ່ເປັນພະຍາດຂີ້ທູດນຸ່ງເສື້ອຜ້າທີ່ຂາດ ແລະໃຫ້ປ່ອຍຜົມ ແລະໃຫ້ລາວເອົາຜ້າ
ປົກໜວດໄວ້ ແລ້ວຮ້ອງໄປວ່າ 'ມົນທິນ ມົນທິນ' 46ລາວຈະເປັນມົນທິນຢູ່ຕະຫລອດເວລາທີ່
ລາວເປັນພະຍາດ ລາວເປັນມົນທິນ ລາວຈະຕ້ອງຢູ່ນອກຄ້າຍແຕ່ຜູ້ດຽວ

47ຫາກໃນເຄື່ອງແຕ່ງກາຍມີພະຍາດຂີ້ທູດ ບໍ່ວ່າຈະເປັນເຄື່ອງແຕ່ງກາຍຂົນສັດ ຫລືຜ້າປ່ານ
48ຫລືຕິດຕາມຜ້າປ່ານຕ່ອນໃດຕ່ອນໜຶ່ງ ຫລືຜ້າຂົນສັດຫລືໜັງສັດ ຫລືສິ່ງໃດໆ ຊຶ່ງເຮັດດ້ວຍ
ໜັງສັດ 49ຖ້າພະຍາດນັ້ນຫາກເຮັດໃຫ້ເຄື່ອງແຕ່ງກາຍມີສີຂຽວ ຫລືສີແດງ ກໍສະແດງວ່າແມ່ນຂີ້
ເຮື້ອນທີ່ກຳລັງແຜ່ລາມອອກໄປ ແລະຕ້ອງນຳສິ່ງນັ້ນໄປສະແດງຕໍ່ປະໂລຫິດ 50ປະໂລຫິດຈະ
ກວດເບິ່ງພະຍາດ ແລະເອົາສິ່ງທີ່ເປັນພະຍາດນັ້ນໄປໄວ້ຕ່າງຫາກເຈັດມື້ 51ໃນມື້ທີເຈັດ ເພິ່ນຈະ
ກວດເບິ່ງອີກ ແລະຖ້າພະຍາດຂີ້ເຮື້ອນແຜ່ລາມອອກໄປ ສິ່ງນັ້ນກໍເປັນມົນທິນ 52ປະໂລຫິດຈະ
ຕ້ອງເຜົາສິ່ງເຫລົ່ານັ້ນ ເພາະມັນມີຂີ້ເຮື້ອນທີ່ກຳລັງແຜ່ລາມອອກໄປ ຈຶ່ງໃຫ້ເຜົາໄຟຖິ້ມເສຍ
53ແຕ່ເມື່ອກວດເບິ່ງແລ້ວ ຖ້າປະໂລຫິດຫາກເຫັນວ່າ ຂີ້ເຮື້ອນບໍ່ໄດ້ແຜ່ລາມອອກໄປເຖິງສິ່ງຂອງ
54ເພິ່ນກໍຈະສັ່ງໃຫ້ເອົາໄປຊັກ ແລະປະໄວ້ຕ່າງຫາກອີກເຈັດມື້ 55ເມື່ອຊັກແລ້ວປະໂລຫິດຈະ
ກວດເບິ່ງ ແລະຖ້າບໍລິເວນບ່ອນເປັນຂີ້ເຮື້ອນຫາກບໍ່ປ່ຽນສີ ຫລືບໍ່ແຜ່ລາມອອກໄປກໍດີ ມັນກໍຍັງ
ເປັນມົນທິນຢູ່; ເຈົ້າຈົ່ງເຜົາສິ່ງຂອງນັ້ນເສຍ ບໍ່ວ່າບໍລິເວນທີ່ເປັນພະຍາດນັ້ນຈະຢູ່ຂ້າງໃນ ຫລືຢູ່
ຂ້າງນອກສິ່ງຂອງກໍຕາມ 56ແຕ່ຫລັງຈາກທີ່ປະໂລຫິດໄດ້ກວດເບິ່ງແລ້ວ ຖ້າບໍລິເວນທີ່ເປັນຂີ້
ເຮື້ອນຫາກມີສີຊີດໆລົງ ປະໂລຫິດຕ້ອງຈີກບໍລິເວນທີ່ຕິດພະຍາດນັ້ນອອກຈາກເຄື່ອງນຸ່ງ ຫລື
ອອກຈາກໜັງສັດ 57ຕໍ່ມາ ຖ້າຂີ້ເຮື້ອນຫາກປະກົດຂຶ້ນມາອີກ ແລະແຜ່ລາມອອກໄປ ຜູ້ເປັນເຈົ້າ
ຂອງຈະຕ້ອງເຜົາສິ່ງເຫລົ່ານັ້ນເສຍ 58ຖ້າລາວຫາກຊັກສິ່ງນັ້ນແລ້ວ ແລະຈຸດບໍລິເວນນັ້ນໝົດໄປ
ຕ້ອງໃຫ້ລາວຊັກຕື່ມອີກ ແລະຈຶ່ງຈະຖືວ່າເຄື່ອງນັ້ນບໍ່ເປັນມົນທິນຕາມພຣະບັນຍັດ

[59]ອັນນີ້ແຫລະ ແມ່ນບັນຍັດກ່ຽວກັບພະຍາດຂີ້ເຮື້ອນ ບໍ່ວ່າເກີດນຳຂົນສັດ ຫລືຜ້າປ່ານ ຫລື
ໃນຜ້າປ່ານ ຫລືໃນເຄື່ອງນຸ່ງທີ່ເປັນຂົນສັດ ຫລືສິ່ງໃດໆ ກໍຕາມທີ່ເຮັດດ້ວຍໜັງສັດ; ອັນນັ້ນ
ແຫລະຄືຄຳຕັດສິນວ່າ ເປັນມົນທິນ ຫລືບໍ່ເປັນມົນທິນຕາມພຣະບັນຍັດ.

# ບົດທີ 14

## ການຊຳລະຄົນທີ່ເຄີຍເປັນພະຍາດຂີ້ທູດ

[1]ພຣະຜູ້ເປັນເຈົ້າກ່າວກັບໂມເຊວ່າ, [2]“ຕໍ່ໄປນີ້ເປັນພຣະບັນຍັດເລື່ອງຄົນເປັນຂີ້ທູດໃນມື້ຊຳ-
ລະຕົວຂອງລາວ ໃຫ້ພາລາວມາຫາປະໂລຫິດ [3]ແລະໃຫ້ປະໂລຫິດອອກໄປນອກຄ້າຍ ໃຫ້ປະ-
ໂລຫິດກວດເບິ່ງ ຖ້າຜູ້ປ່ວຍຫາຍຈາກພະຍາດຂີ້ທູດແລ້ວ [4]ກໍໃຫ້ປະໂລຫິດສັ່ງລາວໃຫ້ຈັດຂອງ
ສຳລັບຜູ້ຈະຮັບການຊຳລະ ຄືນົກສະອາດທີ່ມີຊີວິດສອງໂຕ ໄມ້ແປກ ກັບດ້າຍສີແດງ ແລະຕົ້ນ
ຫູສົບ [5]ໃຫ້ຂ້ານົກໂຕໜຶ່ງໃນພາຊະນະດິນທີ່ມີນ້ຳສະອາດ [6]ສຳລັບນົກໂຕທີ່ຍັງເປັນຢູ່ນັ້ນ ໃຫ້
ປະໂລຫິດເອົານົກໂຕທີ່ຍັງເປັນຢູ່ກັບໄມ້ແປກ ດ້າຍສີແດງ ຕົ້ນຫູສົບ ຈຸ່ມເຂົ້າໄປໃນເລືອດຂອງ
ນົກທີ່ຖືກຂ້າໃນພາຊະນະດິນນັ້ນ [7]ແລະໃຫ້ປະໂລຫິດຊິດໃສ່ຄົນທີ່ຈະຮັບການຊຳລະຈາກພະ-
ຍາດຂີ້ທູດເຈັດເທື່ອ ແລ້ວປະກາດວ່າ ລາວສະອາດ ແລະໃຫ້ປ່ອຍນົກໂຕທີ່ຍັງມີຊີວິດນັ້ນໄປໃນ
ທົ່ງນາ

[8]ໃຫ້ຜູ້ທີ່ຮັບການຊຳລະຊັກເສື້ອຜ້າຂອງຕົນ ແລະໃຫ້ແຖຜົມກັບຂົນທັງໝົດ ແລະອາບນ້ຳ
ລາວກໍຈະສະອາດ ຕໍ່ຈາກນັ້ນກໍໃຫ້ລາວເຂົ້າໄປໃນຄ້າຍໄດ້ ແຕ່ໃຫ້ນອນຢູ່ນອກເຕັນຂອງລາວ
ເຈັດມື້ [9]ເມື່ອຮອດມື້ທີເຈັດ ໃຫ້ລາວແຖຜົມຈາກຫົວຂອງລາວໃຫ້ໝົດ ໃຫ້ລາວແຖໜວດ ແລະ
ແຖຂົນຄິ້ວ ຄືແຖໃຫ້ໝົດແລ້ວໃຫ້ຊັກເສື້ອຜ້າ ແລະອາບນ້ຳ ລາວກໍຈະສະອາດ

[10]ໃນມື້ທີແປດ ໃຫ້ລາວເອົາລູກແກະຜູ້ສອງໂຕທີ່ດີທີ່ສຸດຄືບໍ່ມີຕຳໜິ ແລະລູກແກະແມ່ອາຍຸ
ໜຶ່ງປີໂຕໜຶ່ງທີ່ດີທີ່ສຸດ ຄືປາສະຈາກຕຳໜິ ແລະຍອດແປ້ງນວດດ້ວຍນ້ຳມັນສາມໃນສິບເອຟາ
ກັບນ້ຳມັນຈອກໜຶ່ງ [11]ໃຫ້ປະໂລຫິດຜູ້ເຮັດການຊຳລະຕົວ ເອົາຜູ້ທີ່ຮັບການຊຳລະກັບສິ່ງຂອງ
ເຫລົ່ານີ້ມາຕໍ່ພຣະພັກພຣະຜູ້ເປັນເຈົ້າທີ່ປະຕູຫໍເຕັນແຫ່ງຊຸມນຸມ

[12]ໃຫ້ປະໂລຫິດເອົາລູກແກະຜູ້ໂຕໜຶ່ງໄປຖວາຍເປັນເຄື່ອງບູຊາໄຖ່ຄວາມຜິດ ພ້ອມກັບນ້ຳມັນ
ຈອກໜຶ່ງ ມາເປັນເຄື່ອງບູຊາຖວາຍຕໍ່ພຣະພັກພຣະຜູ້ເປັນເຈົ້າ [13]ໃຫ້ປະໂລຫິດຂ້າລູກແກະນັ້ນ
ໃນບ່ອນທີ່ພວກເຂົາຂ້າສັດເປັນເຄື່ອງບູຊາໄຖ່ບາບ ແລະເປັນເຄື່ອງເຜົາບູຊາໃນບ່ອນທີ່ບໍລິສຸດ
ເພາະວ່າເຄື່ອງບູຊາໄຖ່ຄວາມຜິດກໍຄືເຄື່ອງບູຊາໄຖ່ບາບ ເປັນຂອງທີ່ຕົກແກ່ປະໂລຫິດ ເປັນ
ຂອງບໍລິສຸດທີ່ສຸດ [14]ປະໂລຫິດຈະເອົາເລືອດຂອງເຄື່ອງບູຊາໄຖ່ຄວາມຜິດມາ ແລະປະໂລຫິດ
ຈະເຈີມປາຍຫູເບື້ອງຂວາຂອງຜູ້ທີ່ຮັບການຊຳລະ ແລະເຈີມທີ່ນິ້ວໂປ້ມືຂວາ ແລະນິ້ວໂປ້ຕີນ
ຂວາຂອງລາວ [15]ປະໂລຫິດຈະເອົານ້ຳມັນໜຶ່ງຈອກມາ ຖອກໃສ່ຝາມືຊ້າຍຂອງຕົນ [16]ແລະເອົາ
ນິ້ວມືຂວາຈຸ່ມນ້ຳມັນ ທີ່ຢູ່ໃນມືຊ້າຍ ຊິດນ້ຳມັນດ້ວຍນິ້ວມືຂອງລາວເຈັດເທື່ອຕໍ່ພຣະພັກພຣະຜູ້-
ເປັນເຈົ້າ [17]ສ່ວນນ້ຳມັນທີ່ເຫລືອຢູ່ໃນມືນັ້ນ ປະໂລຫິດຈະເອົາມາ ເຈີມປາຍຫູຂວາຂອງຜູ້ທີ່ຮັບ
ການຊຳລະ ແລະນິ້ວໂປ້ມືຂວາ ແລະນິ້ວໂປ້ຕີນຂວາ ເທິງເລືອດເຄື່ອງບູຊາໄຖ່ຄວາມຜິດ

18ສ່ວນນ້ຳມັນທີ່ຍັງເຫລືອຢູ່ໃນມືຂອງປະໂລຫິດນັ້ນ ລາວຈະເຈີມຫົວຂອງຜູ້ຮັບການຊຳລະ
ແລ້ວປະໂລຫິດຈະເຮັດການໄຖ່ບາບຂອງລາວຕໍ່ພຣະພັກພຣະຜູ້ເປັນເຈົ້າ
19ປະໂລຫິດຈະຖວາຍເຄື່ອງບູຊາໄຖ່ບາບ ເພື່ອເຮັດການໄຖ່ບາບຂອງຜູ້ຮັບການຊຳລະ ໃຫ້
ພົ້ນຈາກມົນທິນຂອງລາວ ຫລັງຈາກນັ້ນ ປະໂລຫິດຈະຂ້າສັດເປັນເຄື່ອງເຜົາບູຊາ 20ແລະປະ-
ໂລຫິດຈະຖວາຍເຄື່ອງເຜົາບູຊາ ແລະພືດຜົນເປັນເມັດເທິງແທ່ນບູຊາ ປະໂລຫິດຈະເຮັດການ
ໄຖ່ບາບຂອງລາວຕາມນີ້ ແລະລາວກໍຈະສະອາດ
21ຖ້າຜູ້ນັ້ນເປັນຄົນຍາກຈົນ ແລະບໍ່ສາມາດຈະຫາມາໄດ້ກໍໃຫ້ລາວເອົາລູກແກະໂຕໜຶ່ງມາ
ເປັນເຄື່ອງບູຊາໄຖ່ ຄວາມຜິດບາບຂອງລາວ ແລະເອົາຍອດແປ້ງໜຶ່ງໃນສິບເອຟານວດກັບນ້ຳ-
ມັນ ເປັນເຄື່ອງບູຊາ 22ພ້ອມກັບນົກເຂົາສອງໂຕ ຫລືນົກກາງແກໜຸ່ມສອງໂຕ ຕາມທີ່ລາວສາ-
ມາດຫາມາໄດ້ ນົກໂຕໜຶ່ງເປັນເຄື່ອງບູຊາໄຖ່ບາບ ນົກອີກໂຕໜຶ່ງເປັນເຄື່ອງເຜົາບູຊາ
23ໃນມື້ທີແປດໃຫ້ລາວເອົາມາມອບໃຫ້ແກ່ປະໂລຫິດເພື່ອການຊຳລະຕົນທີ່ປະຕູຫໍເຕັນແຫ່ງ
ຊຸມນຸມຖວາຍຕໍ່ພຣະພັກພຣະຜູ້ເປັນເຈົ້າ 24ແລະປະໂລຫິດຈະເອົາລູກແກະທີ່ເປັນເຄື່ອງບູຊາໄຖ່
ຄວາມຜິດ ແລະນ້ຳມັນຈອກໜຶ່ງນັ້ນ ປະໂລຫິດຈະນຳມາເປັນເຄື່ອງບູຊາຖວາຍຕໍ່ພຣະພັກພຣະ-
ຜູ້ເປັນເຈົ້າ 25ພວກເຂົາຈະຂ້າລູກແກະເປັນເຄື່ອງບູຊາໄຖ່ຄວາມຜິດ ແລະປະໂລຫິດຈະເອົາ
ເລືອດຂອງເຄື່ອງບູຊາໄຖ່ຄວາມ ຜິດມາເຈີມປາຍຫູເບື້ອງຂວາຂອງຜູ້ຮັບການຊຳລະ ແລະນີ້ວ
ໂປ້ມືຂວາ ກັບທີ່ນີ້ວໂປ້ຕີນຂວາຂອງລາວ 26ແລ້ວປະໂລຫິດຈະຖອກນ້ຳມັນໃສ່ຝາມືຊ້າຍຂອງ
ຕົນ 27ແລະເອົານ້ຳມັນທີ່ຢູ່ໃນມືຊ້າຍນັ້ນມາຊິດດ້ວຍນິ້ວມືຂວາເຈັດເທື່ອຕໍ່ພຣະພັກພຣະຜູ້ເປັນ-
ເຈົ້າ 28ແລະປະໂລຫິດຈະເອົານ້ຳມັນທີ່ຢູ່ໃນມືເຈີມປາຍຫູເບື້ອງຂວາຂອງຜູ້ຮັບການຊຳລະ ແລະ
ໂປ້ມືຂວາກັບໂປ້ຕີນຂວາຂອງລາວ ບ່ອນທີ່ເຈີມດ້ວຍເລືອດຂອງເຄື່ອງບູຊາໄຖ່ຄວາມຜິດ
29ນ້ຳມັນທີ່ເຫລືອຢູ່ໃນມືຂອງປະໂລຫິດນັ້ນ ລາວຈະເຈີມຫົວຂອງຜູ້ທີ່ຮັບການຊຳລະ ເປັນການ
ໄຖ່ໂທດຂອງລາວຕໍ່ພຣະພັກພຣະຜູ້ເປັນເຈົ້າ
30ແລະລາວຈະຖວາຍນົກເຂົາ ຫລືນົກກາງແກໜຸ່ມໂຕໜຶ່ງຕາມທີ່ລາວສາມາດຫາມາໄດ້ 31ຄື
ຕາມທີ່ລາວສາມາດຫາມາໄດ້ ໃຫ້ຖວາຍນົກໂຕໜຶ່ງເປັນເຄື່ອງບູຊາໄຖ່ບາບ ນົກອີກໂຕໜຶ່ງເປັນ
ເຄື່ອງເຜົາບູຊາ ພ້ອມກັບເຄື່ອງບູຊາພືດຜົນເປັນເມັດ ແລະປະໂລຫິດຈະເຮັດການໄຖ່ບາບຂອງ
ຜູ້ຮັບການຊຳລະຕໍ່ພຣະພັກພຣະຜູ້ເປັນເຈົ້າ 32ນີ້ແມ່ນພຣະບັນຍັດສຳລັບຜູ້ທີ່ເປັນພະຍາດຂີ້ທູດ
ທີ່ບໍ່ສາມາດຫາເຄື່ອງບູຊາເພື່ອການຊຳລະຕົນໄດ້”
33ພຣະຜູ້ເປັນເຈົ້າກ່າວກັບໂມເຊແລະອາໂຣນວ່າ 34“ເມື່ອເຈົ້າເຂົ້າໄປໃນແຜ່ນດິນການາ-
ອານ ຊຶ່ງເຮົາຈະໃຫ້ແກ່ເຈົ້າເປັນກຳມະສິດນັ້ນ ເຮົາຈະໃສ່ພະຍາດຂີ້ທູດເຂົ້າໃນເຮືອນຫລັງໜຶ່ງ
ຫລັງໃດໃນແຜ່ນດິນທີ່ເຈົ້າຈະເປັນເຈົ້າຂອງ 35ຜູ້ໃດທີ່ເປັນເຈົ້າຂອງເຮືອນນັ້ນ ຈະຕ້ອງມາບອກ
ແກ່ປະໂລຫິດວ່າ ‘ຂ້າພະເຈົ້າເຫັນພະຍາດຢ່າງໜຶ່ງເກີດຂຶ້ນໃນເຮືອນຂອງຂ້າພະເຈົ້າ’ 36ແລ້ວ
ປະໂລຫິດຈະບອກໃຫ້ລາວຂົນສິ່ງຂອງອອກຈາກເຮືອນໃຫ້ໝົດ ກ່ອນທີ່ປະໂລຫິດຈະເຂົ້າໄປ
ກວດພະຍາດ ຢ້ານວ່າຂອງທຸກຢ່າງທີ່ຢູ່ໃນເຮືອນນັ້ນຈະຖືກປະກາດວ່າ ເປັນມົນທິນ ຕໍ່ຈາກນັ້ນ
ປະໂລຫິດຈຶ່ງຈະເຂົ້າໄປກວດເບິ່ງເຮືອນ 37ປະໂລຫິດຈະກວດເບິ່ງພະຍາດ ຖ້າພະຍາດນັ້ນຢູ່ທີ່

ຝາເຮືອນ ເປັນຮອຍສີຂຽວໆແດງໆ ແລະປະກົດວ່າຢູ່ເລິກລົງໄປໃນຝາເຮືອນ 38ແລ້ວປະໂລ-
ຫິດຈະອອກຈາກເຮືອນໄປຢູ່ທີ່ປະຕູເຮືອນແລ້ວປິດເຮືອນໄວ້ເຈັດມື້ 39ເມື່ອຮອດມື້ທີເຈັດ ປະໂລ-
ຫິດຈະກັບມາກວດເບິ່ງອີກ ເບິ່ງເຖີດ ຖ້າພະຍາດນັ້ນລາມໄປໃນຝາເຮືອນ 40ແລ້ວປະໂລຫິດຈະ
ໃຫ້ເອົາຫີນກ້ອນທີ່ຕິດພະຍາດນັ້ນອອກ ເອົາໄປໂຍນຖິ້ມໃນບ່ອນທີ່ເປັນມົນທິນຢູ່ນອກເມືອງ
41ແລະສັ່ງໃຫ້ຂູດຝາເຮືອນ ຂີ້ປູນທີ່ຂູດອອກມານັ້ນໃຫ້ເອົາໄປຖິ້ມໃນບ່ອນທີ່ເປັນມົນທິນຢູ່ນອກ
ເມືອງ 42ແລ້ວໃຫ້ຫາກ້ອນຫີນອື່ນມາແທນກ້ອນຫີນທີ່ເອົາອອກໄປ ແລະເອົາປູນມາໂບກຝາ
ເຮືອນນັ້ນ

43ເມື່ອພວກເຂົາເອົາຫີນອອກ ຂູດເຮືອນ ແລະທາປູນໃໝ່ແລ້ວ ຍັງເກີດພະຍາດຂຶ້ນໃນເຮືອນ
ນັ້ນອີກ 44ປະໂລຫິດຈະໄປກວດເບິ່ງ ຖ້າພະຍາດນັ້ນລາມໄປໃນເຮືອນ ເປັນພະຍາດຂີ້ທູດຢ່າງ
ຮ້າຍແຮງໃນເຮືອນ ເຮືອນນັ້ນກໍເປັນມົນທິນ 45ໃຫ້ລາວມ້າງເຮືອນນັ້ນລົງ ກ້ອນຫີນ ໄມ້ ແລະ
ປູນທີ່ເຮັດເຮືອນນັ້ນ ໃຫ້ຂົນໄປຖິ້ມໃນບ່ອນທີ່ເປັນມົນທິນຢູ່ນອກເມືອງ 46ຍິ່ງໄປກວ່ານັ້ນອີກ
ເມື່ອເຮືອນປິດຢູ່ ຖ້າມີຜູ້ໃດເຂົ້າໄປ ຜູ້ນັ້ນຈະເປັນມົນທິນຈົນຮອດຕອນແລງ 47ຜູ້ໃດທີ່ນອນລົງ
ໃນເຮືອນນັ້ນຕ້ອງຊັກເສື້ອຜ້າຂອງລາວ ແລະຜູ້ທີ່ກິນໃນເຮືອນນັ້ນຕ້ອງຊັກເສື້ອຜ້າຂອງລາວ
ດ້ວຍ

48ແຕ່ປະໂລຫິດມາກວດກາ ເມື່ອທາປູນໃໝ່ແລ້ວ ພະຍາດນັ້ນບໍ່ໄດ້ລາມໄປໃນເຮືອນອີກ
ປະໂລຫິດຈະປະກາດວ່າເຮືອນນັ້ນສະອາດ ເພາະພະຍາດຫາຍໄປແລ້ວ 49ແລະເພື່ອຈະຊຳລະ
ເຮືອນນັ້ນ ໃຫ້ລາວເອົານົກສອງໂຕກັບໄມ້ແປກ ດ້າຍສີແດງ ແລະຕົ້ນຫູສົບມາເພື່ອຊຳລະ
50ໃຫ້ຂ້ານົກໂຕໜຶ່ງໃນພາຊະນະດິນທີ່ມີນ້ຳສະອາດ 51ເອົາໄມ້ແປກ ຕົ້ນຫູສົບ ແລະດ້າຍສີແດງ
ພ້ອມກັບນົກໂຕທີ່ຍັງມີຊີວິດຢູ່ຈຸ່ມລົງໃນເລືອດນົກທີ່ໄດ້ຂ້າໃນນ້ຳສະອາດ ແລ້ວຊິດໃສ່ເຮືອນນັ້ນ
ເຈັດເທື່ອ 52ລາວຈະໄດ້ຊຳລະເຮືອນດ້ວຍເລືອດນົກ ດ້ວຍນ້ຳທີ່ສະອາດ ແລະດ້ວຍນົກທີ່ມີຊີວິດ
ດ້ວຍໄມ້ແປກ ຕົ້ນຫູສົບ ແລະດ້າຍສີແດງ 53ໃຫ້ລາວປ່ອຍນົກທີ່ມີຊີວິດອອກຈາກເມືອງໄປຫາ
ທົ່ງນາ ດັ່ງນີ້ແຫລະ ລາວຈະໄດ້ເຮັດການໄຖ່ບາບຂອງເຮືອນ ແລະເຮືອນນັ້ນກໍສະອາດ”

54ນີ້ແມ່ນພຣະບັນຍັດກ່ຽວກັບພະຍາດຂີ້ທູດຕ່າງໆ ພະຍາດຂີ້ກາກ 55ພະຍາດຂີ້ທູດໃນເຄື່ອງ
ແຕ່ງກາຍ ຫລືໃນເຮືອນ 56ເປັນບວມ ຫລືໂພງຫລືດ່າງ 57ເພື່ອໃຫ້ຮູ້ວ່າອັນໃດເປັນມົນທິນ ແລະ
ອັນໃດທີ່ສະອາດ ນີ້ແມ່ນພຣະບັນຍັດເລື່ອງພະຍາດຂີ້ທູດ

# ບົດທີ 15

## ເລື່ອງອື່ນໆກ່ຽວກັບການເປັນມົນທິນ ແລະການຊຳລະ

1ພຣະຜູ້ເປັນເຈົ້າກ່າວກັບໂມເຊແລະອາໂຣນວ່າ 2“ຈົ່ງກ່າວແກ່ຄົນອິສຣາເອນວ່າ ເມື່ອຜູ້ໃດ
ເປັນພະຍາດທີ່ມີນ້ຳໜອງໄຫລອອກຈາກຮ່າງກາຍ ເພາະສິ່ງທີ່ໄຫລອອກນັ້ນ ລາວເປັນມົນທິນ
3ຕໍ່ໄປນີ້ເປັນພຣະບັນຍັດກ່ຽວກັບສິ່ງທີ່ເປັນມົນທິນຂອງລາວຍ້ອນພະຍາດທີ່ມີນ້ຳໜອງໄຫລອອກ
ມາຈາກຮ່າງກາຍຂອງລາວ ຫລືບໍ່ໄຫລອອກກໍດີ ເລື່ອງນີ້ກໍຍັງເປັນມົນທິນແກ່ລາວ

4ຕຽງນອນຊຶ່ງຜູ້ໃດທີ່ມີນ້ຳໜອງໄຫລອອກຂຶ້ນໄປນອນ ຕຽງນັ້ນກໍເປັນມົນທິນ ທຸກສິ່ງທີ່ລາວ

ຮອງນັ່ງກໍເປັນມົນທິນ 5ຜູ້ໃດທີ່ແຕະຕ້ອງຕຽງຂອງລາວ ຕ້ອງຊັກເສື້ອຜ້າຂອງຕົນແລະອາບນໍ້າ
ແລະຈະເປັນມົນທິນໄປຈົນຮອດຕອນແລງ 6ຜູ້ໃດໄປນັ່ງເທິງສິ່ງທີ່ຜູ້ມີນໍ້າໜອງໄຫລອອກໄດ້ນັ່ງ
ກ່ອນ ຜູ້ນັ້ນຕ້ອງຊັກເສື້ອຜ້າຂອງຕົນ ແລະອາບນໍ້າ ແລະຈະເປັນມົນທິນໄປຈົນຮອດຕອນແລງ
7ຜູ້ໃດໄປແຕະຕ້ອງຮ່າງກາຍຂອງຜູ້ທີ່ມີນໍ້າໜອງໄຫລອອກ ຜູ້ນັ້ນຕ້ອງຊັກເສື້ອຜ້າຂອງຕົນ
ແລະອາບນໍ້າ ແລະເປັນມົນທິນໄປຈົນຮອດຕອນແລງ 8ແລະຖ້າຜູ້ໃດທີ່ມີນໍ້າໜອງໄຫລອອກ
ຖົ່ມນໍ້າລາຍຖືກຜູ້ທີ່ສະອາດ ຜູ້ທີ່ຖືກນໍ້າລາຍ ຕ້ອງຊັກເສື້ອຜ້າ ແລະອາບນໍ້າ ແລະຈະເປັນມົນ-
ທິນໄປຈົນຮອດຕອນແລງ 9ແລະສິ່ງໃດໆຊຶ່ງຜູ້ມີນໍ້າໜອງໄຫລອອກນັ່ງຢູ່ ສິ່ງນັ້ນກໍເປັນມົນທິນ
10ຜູ້ໜຶ່ງຜູ້ໃດທີ່ແຕະຕ້ອງສິ່ງທີ່ຮອງລາວຢູ່ນັ້ນ ຜູ້ນັ້ນຈະເປັນມົນທິນໄປຈົນຮອດຕອນແລງ ແລະ
ຜູ້ໃດທີ່ຈັບຖືສິ່ງນັ້ນຕ້ອງຊັກເສື້ອຜ້າຂອງຕົນ ແລະອາບນໍ້າ ແລະຈະເປັນມົນທິນໄປຈົນຮອດ
ຕອນແລງ 11ຫາກຜູ້ທີ່ມີນໍ້າໜອງໄຫລອອກໄປແຕະຕ້ອງຜູ້ໃດດ້ວຍມືທີ່ບໍ່ໄດ້ລ້າງ ຜູ້ຖືກແຕະ-
ຕ້ອງນັ້ນ ຕ້ອງຊັກເສື້ອຜ້າຂອງຕົນແລະອາບນໍ້າ ແລະຈະເປັນມົນທິນໄປຈົນຮອດຕອນແລງ
12ພາຊະນະດິນຊຶ່ງຜູ້ທີ່ມີນໍ້າໜອງໄຫລອອກໄດ້ແຕະຕ້ອງນັ້ນໃຫ້ທຳລາຍ ແລະພາຊະນະໄມ້ທຸກ
ຢ່າງກໍໃຫ້ຊຳລະດ້ວຍນໍ້າ

13ເມື່ອລາວໄດ້ຊຳລະນໍ້າໜອງທີ່ໄຫລອອກຂອງລາວແລ້ວ ລາວຕ້ອງນັບການຊຳລະຂອງ
ລາວໃຫ້ຄົບເຈັດມື້ ແລະລາວຕ້ອງຊັກເສື້ອຜ້າ ແລະອາບນໍ້າໃນບ່ອນທີ່ນໍ້າໄຫລ ລາວຈຶ່ງຈະສະ-
ອາດ 14ໃນມື້ທີແປດ ໃຫ້ລາວເອົານົກເຂົາສອງໂຕ ຫລືນົກກາງແກໜຸ່ມສອງໂຕມາຕໍ່ພຣະພັກ
ພຣະຜູ້ເປັນເຈົ້າທີ່ປະຕູຫໍເຕັນແຫ່ງຊຸມນຸມ ແລະມອບຂອງເຫລົ່ານັ້ນໃຫ້ແກ່ປະໂລຫິດ 15ໃຫ້ປະ-
ໂລຫິດຖວາຍບູຊາ ຄືຖວາຍນົກໂຕໜຶ່ງເປັນເຄື່ອງຖວາຍບູຊາໄຖ່ບາບ ແລະນົກອີກໂຕໜຶ່ງເປັນ
ເຄື່ອງເຜົາບູຊາ ແລະປະໂລຫິດຈະເຮັດການໄຖ່ບາບຂອງລາວຕໍ່ພຣະພັກພຣະຜູ້ເປັນເຈົ້າ ກ່ຽວ
ກັບເລື່ອງນໍ້າໜອງໄຫລອອກຂອງລາວ

16ຊາຍຄົນໃດທີ່ມີນໍ້າກາມໄຫລອອກ ໃຫ້ລາວອາບນໍ້າ ແລະຈະເປັນມົນທິນໄປຈົນຮອດຕອນ
ແລງ 17ເຄື່ອງແຕ່ງກາຍທຸກຢ່າງ ແລະຜິວໜັງທຸກສ່ວນທີ່ນໍ້າກາມໄຫລຖືກ ຕ້ອງຊຳລະໃນນໍ້າ
ແລະຈະເປັນມົນທິນໄປຈົນຮອດຕອນແລງ 18ຊາຍຄົນໃດທີ່ໄດ້ສົມສູ່ກັບຍິງ ແລະມີນໍ້າກາມໄຫລ
ອອກທັງສອງຈະຕ້ອງອາບນໍ້າ ແລະຈະເປັນມົນທິນໄປຈົນຮອດຕອນແລງ

19ເມື່ອຜູ້ຍິງມີເລືອດໄຫລອອກເປັນເລືອດປະຈຳເດືອນ ນາງຈະຕ້ອງຢູ່ຕ່າງຫາກເຈັດມື້ ແລະ
ຜູ້ໃດແຕະຕ້ອງນາງ ຈະຕ້ອງເປັນມົນທິນໄປຈົນຮອດຕອນແລງ 20ແລະທຸກສິ່ງທີ່ນາງນອນທັບ
ໃນເວລາທີ່ນາງຕ້ອງແຍກອອກນັ້ນກໍເປັນມົນທິນ ສິ່ງໃດທີ່ນາງໄປນັ່ງທັບ ສິ່ງນັ້ນກໍເປັນມົນທິນ
21ຜູ້ໃດໄປແຕະຕ້ອງບ່ອນນອນຂອງນາງ ຜູ້ນັ້ນຕ້ອງຊັກເສື້ອຜ້າ ແລະອາບນໍ້າ ແລະຈະເປັນ
ມົນທິນໄປຈົນຮອດແລງ 22ແລະຜູ້ໜຶ່ງຜູ້ໃດທີ່ແຕະຕ້ອງສິ່ງທີ່ນາງໄດ້ນັ່ງ ຜູ້ນັ້ນຕ້ອງຊັກເສື້ອຜ້າ
ແລະອາບນໍ້າ ແລະຈະເປັນມົນທິນໄປຈົນຮອດຕອນແລງ 23ສິ່ງທີ່ນາງນັ່ງທັບຈະເປັນບ່ອນນອນ
ຫລືສິ່ງໃດກໍດີ ເມື່ອຜູ້ໃດໄປແຕະຕ້ອງ ຜູ້ນັ້ນຈະເປັນມົນທິນໄປຈົນຮອດຕອນແລງ 24ຖ້າຊາຍໃດ
ໄປສົມສູ່ກັບນາງ ແລະມົນທິນຂອງນາງມາຕິດທີ່ຊາຍນັ້ນ ຊາຍນັ້ນຈະເປັນມົນທິນໄປເຈັດມື້
ລາວໄປນອນທີ່ຕຽງໃດ ຕຽງນັ້ນກໍເປັນມົນທິນ

25ຖ້າຜູ້ຍິງຄົນໃດມີເລືອດໄຫລອອກຫລາຍມື້ ຊຶ່ງບໍ່ແມ່ນເປັນເວລາທີ່ນາງຕ້ອງຢູ່ຕ່າງຫາກ
ຫລືຖ້ານາງມີເລືອດໄຫລອອກດົນກວ່າກຳນົດທີ່ນາງຕ້ອງຢູ່ຕ່າງຫາກນັ້ນ ທຸກມື້ທີ່ມີເລືອດໄຫລ
ອອກນາງຈະເປັນມົນທິນ ນາງຈະເປັນມົນທິນແບບດຽວກັນກັບເວລາທີ່ນາງຕ້ອງຢູ່ຕ່າງຫາກ
26ຕຽງທຸກໜ່ວຍທີ່ນາງໃຊ້ນອນ ແລະບ່ອນນັ່ງທຸກບ່ອນທີ່ນາງໃຊ້ນັ່ງ ແມ່ນເປັນມົນທິນໝົດ 27ຜູ້
ໃດທີ່ແຕະຕ້ອງສິ່ງເຫລົ່ານັ້ນ ຜູ້ນັ້ນກໍເປັນມົນທິນດ້ວຍ ລາວຕ້ອງຊັກເສື້ອຜ້າ ແລະອາບນໍ້າ
ແລະຈະເປັນມົນທິນໄປຈົນຮອດຕອນແລງ

28ຖ້ານາງຊຳລະເລືອດທີ່ໄຫລອອກຂອງນາງແລ້ວ ໃຫ້ນາງນັບເອງໃຫ້ຄົບເຈັດມື້ ຕໍ່ຈາກນັ້ນ
ນາງຈຶ່ງຈະສະອາດ 29ແລະໃນມື້ທີແປດ ໃຫ້ນາງເອົານົກເຂົາສອງໂຕ ຫລືນົກກາງແກໜຸ່ມສອງ
ໂຕໄປໃຫ້ປະໂລຫິດທີ່ປະຕູຫໍເຕັນແຫ່ງຊຸມນຸມ 30ແລະປະໂລຫິດຈະຖວາຍນົກໂຕໜຶ່ງເປັນເຄື່ອງ
ບູຊາໄຖ່ບາບ ແລະນົກອີກໂຕໜຶ່ງເປັນເຄື່ອງເຜົາບູຊາ ປະໂລຫິດຈະເຮັດການໄຖ່ບາບໃຫ້ນາງຕໍ່
ພຣະພັກພຣະຜູ້ເປັນເຈົ້າ ກ່ຽວກັບເລື່ອງເລືອດໄຫລອອກທີ່ເປັນມົນທິນຂອງນາງ

31ດັ່ງນີ້ແຫລະ ພວກເຈົ້າຈະໃຫ້ຄົນອິສຣາເອນແຍກຈາກມົນທິນຂອງພວກເຂົາທັງຫລາຍ
ຢ້ານວ່າພວກເຂົາຈະຕ້ອງຕາຍດ້ວຍມົນທິນຂອງຕົນເອງ ຫາກພວກເຂົາເຮັດໃຫ້ຫໍເຕັນຂອງເຮົາ
ທີ່ຢູ່ທ່າມກາງພວກເຂົາເປັນມົນທິນໄປນຳ” 32ນີ້ແມ່ນພຣະບັນຍັດເລື່ອງຜູ້ທີ່ມີນໍ້າໜອງໄຫລອອກ
ແລະຊາຍທີ່ມີນໍ້າກາມໄຫລອອກ ຊຶ່ງເຮັດໃຫ້ຕົນເປັນມົນທິນ 33ກ່ຽວກັບຜູ້ຍິງທີ່ປ່ວຍດ້ວຍມົນທິນ
ຂອງນາງ ກໍຄືກ່ຽວກັບຜູ້ທີ່ມີເລືອດໄຫລອອກ ບໍ່ວ່າຊາຍ ຫລືຍິງ ແລະກ່ຽວກັບຊາຍຜູ້ສົມສູ່ກັບ
ຍິງທີ່ມີມົນທິນ

# ບົດທີ 16

## ມື້ລຶບລ້າງບາບ

1ພຣະຜູ້ເປັນເຈົ້າກ່າວກັບໂມເຊຫລັງຈາກທີ່ລູກຊາຍທັງສອງຂອງອາໂຣນເສຍຊີວິດຍ້ອນ
ພວກເຂົາຖວາຍບູຊາຕໍ່ພຣະພັກພຣະຜູ້ເປັນເຈົ້າ ແລະເຖິງແກ່ຄວາມຕາຍ 2ແລະພຣະຜູ້ເປັນ-
ເຈົ້າກ່າວກັບໂມເຊວ່າ “ເຈົ້າຈົ່ງບອກອາໂຣນອ້າຍຂອງເຈົ້າວ່າ ຢ່າເຂົ້າໄປໃນສະຖານທີ່ບໍລິສຸດ
ທີ່ຢູ່ໃນຜ້າກັ້ງຕໍ່ໜ້າພຣະທີ່ນັ່ງແຫ່ງພຣະຄຸນຊຶ່ງຢູ່ເທິງຫລັງຫີບ ຕະຫລອດເວລາ ເພື່ອລາວຈະບໍ່
ຕາຍເພາະວ່າເຮົາຈະປະກົດໃນເມກເໜືອພຣະທີ່ນັ່ງແຫ່ງພຣະຄຸນ

3ແຕ່ອາໂຣນຈະເຂົ້າມາໃນບ່ອນບໍລິສຸດໄດ້ດັ່ງນີ້ ຄືໃຫ້ເອົາງົວໜຸ່ມໂຕໜຶ່ງໄປເປັນເຄື່ອງບູຊາ
ໄຖ່ບາບ ແລະແກະຜູ້ໂຕໜຶ່ງເປັນເຄື່ອງເຜົາບູຊາ 4ໃຫ້ລາວນຸ່ງເສື້ອປ່ານບໍລິສຸດ ແລະນຸ່ງໂສ້ງຜ້າ
ປ່ານ ຄາດສາຍຮັດແອວຜ້າປ່ານ ແລະເອົາປ່ານຄຽນຫົວ ນີ້ເປັນເຄື່ອງແຕ່ງກາຍບໍລິສຸດ ລາວ
ຈະຕ້ອງອາບນໍ້າແລ້ວຈຶ່ງນຸ່ງ 5ແລະໃຫ້ລາວເອົາແບ້ຜູ້ສອງໂຕເປັນເຄື່ອງບູຊາໄຖ່ບາບກັບແກະຜູ້
ໂຕໜຶ່ງເປັນເຄື່ອງເຜົາບູຊາຈາກຊຸມນຸມຊົນອິສຣາເອນ 6ແລະອາໂຣນຈະຖວາຍງົວເປັນເຄື່ອງບູ-
ຊາໄຖ່ບາບຂອງຕົນເອງ ແລະຈະເຮັດການໄຖ່ບາບຂອງຕົນເອງແລະຄອບຄົວຂອງຕົນ 7ແລ້ວ
ລາວຈະເອົາແບ້ສອງໂຕນັ້ນໄປຖວາຍຕໍ່ພຣະພັກພຣະຜູ້ເປັນເຈົ້າທີ່ປະຕູຫໍເຕັນແຫ່ງຊຸມນຸມ
8ແລະອາໂຣນຈະຈັບສະຫລາກແບ້ສອງໂຕນັ້ນ ສະຫລາກໜຶ່ງຕົກເປັນຂອງພຣະຜູ້ເປັນເຈົ້າ

ແລະອີກສະຫລາກໜຶ່ງເພື່ອແບ້ທີ່ຮັບບາບນັ້ນ 9ແບ້ໂຕທີ່ສະຫລາກຕົກໃສ່ຕ້ອງເປັນຂອງ ພຣະຜູ້-
ເປັນເຈົ້າ ອາໂຣນ ຈະເອົາມາຖວາຍເປັນເຄື່ອງບູຊາໄຖ່ບາບ 10ແຕ່ແບ້ອີກໂຕໜຶ່ງທີ່ຖືກສະຫລາກ
ຕົກໃສ່ໃຫ້ເປັນແບ້ທີ່ຮັບບາບນັ້ນ ໃຫ້ເອົາມາຖວາຍຕໍ່ພຣະພັກ ພຣະຜູ້ເປັນເຈົ້າ ທັງເປັນ ເພື່ອເຮັດ
ການໄຖ່ໂທດບາບໃຫ້ຕົກໃສ່ມັນ ແລ້ວໃຫ້ເອົາມັນໄປປ່ອຍໃນຖິ່ນແຫ້ງແລ້ງກັນດານເປັນແບ້ທີ່ຮັບ
ບາບ

11ອາໂຣນ ຈະຖວາຍງົວເປັນເຄື່ອງໄຖ່ບາບຂອງຕົນ ແລະຈະເຮັດການໄຖ່ໂທດບາບຕົນເອງ
ກັບຄອບຄົວຂອງຕົນ ລາວຈະຂ້າງົວເປັນເຄື່ອງບູຊາໄຖ່ບາບຂອງລາວເອງ 12ອາໂຣນ ຈະເອົາ
ກະຖາງໄຟທີ່ມີຖ່ານລຸກຢູ່ເຕັມມາຈາກແທ່ນບູຊາຕໍ່ພຣະພັກ ພຣະຜູ້ເປັນເຈົ້າ ແລະເຄື່ອງຫອມຕຳ
ລະອຽດສອງກຳມືເອົາເຂົ້າໄປພາຍໃນຜ້າກັ້ງ 13ແລ້ວເອົາເຄື່ອງຫອມນັ້ນໃສ່ໄຟຖວາຍຕໍ່ພຣະພັກ
ພຣະຜູ້ເປັນເຈົ້າ ໃຫ້ຄວັນເຄື່ອງຫອມຂຶ້ນຄຸມພຣະທີ່ນັ່ງແຫ່ງພຣະຄຸນຊຶ່ງຢູ່ເທິງຫີບພຣະບັນຍັດ
ເພື່ອລາວຈະບໍ່ຕາຍ 14ລາວຈະເອົາເລືອດງົວມາຊິດດ້ວຍນິ້ວມືຂອງຕົນເທິງພຣະທີ່ນັ່ງແຫ່ງພຣະ-
ຄຸນທາງຕາເວັນອອກ ແລ້ວຈະຊິດເລືອດທີ່ໜ້າພຣະທີ່ນັ່ງແຫ່ງພຣະຄຸນເຈັດເທື່ອດ້ວຍນິ້ວມືຂອງ
ລາວ

15ແລ້ວ ອາໂຣນ ຈະຂ້າແບ້ອັນເປັນເຄື່ອງບູຊາໄຖ່ບາບສຳລັບປະຊາຊົນ ແລະເອົາເລືອດແບ້
ເຂົ້າໄປພາຍໃນຜ້າກັ້ງ ແລະເອົາເລືອດແບ້ໄປເຮັດເຊັ່ນດຽວກັນກັບເຮັດເລືອດງົວ ຄືຊິດໃສ່ເທິງ
ພຣະທີ່ນັ່ງແຫ່ງພຣະຄຸນ ແລະຕໍ່ໜ້າພຣະທີ່ນັ່ງແຫ່ງພຣະຄຸນນັ້ນ 16ດັ່ງນີ້ແຫລະ ລາວຈະເຮັດ
ການໄຖ່ໂທດຂອງສະຖານທີ່ບໍລິສຸດນັ້ນ ເພາະມົນທິນຂອງຄົນ ອິສຣາເອນ ແລະເພາະຄວາມຜິດ
ເພາະບາບ ທັງໝົດຂອງລາວ ແລະ ອາໂຣນ ຈະເຮັດຕໍ່ຫໍເຕັນແຫ່ງຊຸມນຸມຊຶ່ງຢູ່ກັບພວກເຂົາ
ທ່າມກາງມົນທິນຂອງປະຊາຊົນ 17ຢ່າໃຫ້ມີຜູ້ໃດຢູ່ໃນຫໍເຕັນແຫ່ງຊຸມນຸມເມື່ອ ອາໂຣນ ເຂົ້າໄປ
ເຮັດການໄຖ່ໂທດໃນສະຖານທີ່ບໍລິສຸດນັ້ນ ຈົນກວ່າລາວຈະອອກມາ ແລະເຮັດການໄຖ່ໂທດ
ສຳລັບຕົວລາວ ແລະສຳລັບຄອບຄົວຂອງລາວແລະສຳລັບບັນດາຊຸມນຸມຊົນ ອິສຣາເອນ

18ແລະ ອາໂຣນ ຈະອອກໄປຍັງແທ່ນບູຊາຊຶ່ງຢູ່ຕໍ່ພຣະພັກ ພຣະຜູ້ເປັນເຈົ້າ ແລະເຮັດການໄຖ່
ໂທດແທ່ນບູຊານັ້ນ ລາວຈະເອົາເລືອດງົວເລືອດແບ້ເຈີມໃສ່ຈອມຂອງແທ່ນບູຊາໃຫ້ທົ່ວ 19ແລະ
ເອົານິ້ວມືຈຸ່ມເລືອດມາຊິດໃສ່ເທິງແທ່ນບູຊານັ້ນເຈັດເທື່ອ ແລະຊຳລະລ້າງ ແລະຕັ້ງໄວ້ໃຫ້ແທ່ນ
ບູຊາອັນບໍລິສຸດພົ້ນຈາກມົນທິນຂອງຄົນ ອິສຣາເອນ

20ເມື່ອ ອາໂຣນ ສຳເລັດການໄຖ່ບາບຂອງສະຖານທີ່ບໍລິສຸດ ແລະຫໍເຕັນແຫ່ງຊຸມນຸມ ແລະ
ແທ່ນບູຊາບູຊາແລ້ວລາວຈະເອົາແບ້ໂຕທີ່ເປັນຢູ່ອອກມາ 21ແລະ ອາໂຣນ ຈະເອົາມືທັງສອງວາງ
ໄວ້ເທິງຫົວແບ້ທີ່ມີຊີວິດນັ້ນ ແລະກ່າວຄຳສາລະພາບບັນດາຄວາມຊົ່ວຊ້າຂອງຄົນ ອິສຣາເອນ
ແລະຄວາມຜິດທັງໝົດ ແລະບາບ ທັງ ໝົດໃຫ້ຕົກລົງເທິງຫົວແບ້ນັ້ນ ແລະໃຫ້ຄົນທີ່ຕຽມພ້ອມ
ໄວ້ແລ້ວໃຫ້ເອົາແບ້ໄປປ່ອຍໃນຖິ່ນແຫ້ງແລ້ງກັນດານ 22ແບ້ນັ້ນຈະແບກຄວາມຊົ່ວຊ້າທັງໝົດໄປ
ໃນກາງປ່າ ແລ້ວລາວກໍປ່ອຍໃຫ້ແບ້ນັ້ນເຂົ້າໄປໃນຖິ່ນແຫ້ງແລ້ງກັນດານ

23ແລ້ວ ອາໂຣນ ຈະເຂົ້າມາໃນຫໍເຕັນແຫ່ງຊຸມນຸມລາວຈະຖອດເຄື່ອງແຕ່ງກາຍຜ້າປ່ານຊຸດທີ່
ແຕ່ງເຂົ້າໄປໃນສະຖານທີ່ບໍລິສຸດອອກເກັບໄວ້ບ່ອນນັ້ນ 24ແລະລາວຈະຊຳລະຕົວໃນນ້ຳບ່ອນທີ່

ບໍລິສຸດແລ້ວນຸ່ງເຄື່ອງແຕ່ງກາຍຂອງຕົນ ແລະຍ່າງອອກມາຖວາຍເຄື່ອງເຜົາບູຊາຂອງຕົນ ແລະ
ເຜົາເຄື່ອງບູຊາຂອງປະຊາຊົນ ແລະເຮັດການໄຖ່ບາບຂອງຕົນເອງກັບປະຊາຊົນທັງຫລາຍ
25ລາວຈະເອົາໄຂມັນຂອງເຄື່ອງບູຊາໄຖ່ບາບໄປເຜົາເທິງແທ່ນບູຊາ 26ຜູ້ທີ່ປ່ອຍແບ້ໃຫ້ອາ-
ຊາເຊັນນັ້ນຈະຕ້ອງຊັກເສື້ອຜ້າຂອງຕົນ ແລະອາບນໍ້າ ແລ້ວຕໍ່ມາຈຶ່ງຈະເຂົ້າໃນຄ້າຍໄດ້ 27ລາວ
ຈະເອົາງົວຊຶ່ງເປັນເຄື່ອງບູຊາໄຖ່ບາບ ແລະແບ້ຊຶ່ງເປັນເຄື່ອງບູຊາໄຖ່ບາບທີ່ອາໂຣນເອົາເລືອດ
ໄປເຮັດການໄຖ່ບາບສະຖານທີ່ບໍລິສຸດນັ້ນອອກໄປນອກຄ້າຍ ແລະລາວຈະເຜົາຊີ້ນໜັງ ແລະ
ອາຈົມດ້ວຍໄຟ 28ຜູ້ທີ່ເຜົາກໍຕ້ອງຊັກເສື້ອຜ້າຂອງຕົນ ແລະອາບນໍ້າ ຫລັງຈາກນັ້ນ ລາວຈຶ່ງຈະ
ກັບເຂົ້າຄ້າຍໄດ້
29ໃຫ້ເປັນກົດເກນຖາວອນແກ່ເຈົ້າທັງຫລາຍວ່າ ໃນວັນທີສິບເດືອນທີເຈັດ ເຈົ້າຕ້ອງຖ່ອມໃຈ
ລົງ ບໍ່ເຮັດການງານສິ່ງໃດ ທັງຕົວຊາວເມືອງເອງ ຫລືຄົນຕ່າງດ້າວທີ່ອາໄສຢູ່ທ່າມກາງພວກ
ເຈົ້າ 30ເພາະວ່າໃນມື້ນັ້ນ ປະໂລຫິດຈະເຮັດການໄຖ່ໂທດບາບຂອງພວກເຈົ້າ ແລະຊໍາລະລ້າງ
ເຈົ້າ ເຈົ້າຈະສະອາດຕໍ່ພຣະພັກພຣະຜູ້ເປັນເຈົ້າ ແລະພົ້ນຈາກບາບທັງໝົດຂອງເຈົ້າ 31ວັນສະ-
ບາໂຕ ໃຫ້ເຈົ້າທັງຫລາຍຢຸດພັກສະຫງົບ ແລະເຈົ້າຕ້ອງຖ່ອມໃຈລົງ ໂດຍໃຫ້ເປັນກົດເກນຖາ-
ວອນຕະຫລອດໄປ
32ປະໂລຫິດຜູ້ທີ່ຖືກເຈີມ ແລະຖືກສະຖາປະນາໃຫ້ບົວລະບັດໃນຕໍາແໜ່ງປະໂລຫິດແທນພໍ່
ຂອງຕົນ ຈະຕ້ອງເຮັດການໄຖ່ບາບໂດຍນຸ່ງເສື້ອຜ້າປ່ານ ຄືເຄື່ອງປະຈໍາຕໍາແໜ່ງອັນບໍລິສຸດ
33ໃຫ້ພວກເຂົາເຮັດການໄຖ່ບາບແກ່ສະຖານທີ່ບໍລິສຸດ ແລະລາວຈະເຮັດການໄຖ່ບາບໃຫ້ແກ່ຫໍ-
ເຕັນແຫ່ງຊຸມນຸມ ແລະໃຫ້ແກ່ແທ່ນບູຊາ ແລະລາວຈະເຮັດການໄຖ່ບາບໃຫ້ແກ່ປະໂລຫິດ ແລະ
ປະຊາຊົນທັງໝົດໃນຊຸມນຸມຊົນນັ້ນ 34ໂດຍໃຫ້ເປັນກົດເກນຖາວອນແກ່ເຈົ້າທັງຫລາຍ ໃຫ້ເຮັດ
ການໄຖ່ບາບເພື່ອຄົນອິສຣາເອນປີລະເທື່ອ ເພາະບາບ ທັງໝົດຂອງພວກເຂົາ” ແລະລາວກໍ
ເຮັດຕາມທີ່ພຣະຜູ້ເປັນເຈົ້າໄດ້ສັ່ງໄວ້ກັບໂມເຊ

# ບົດທີ 17

## ເລືອດແມ່ນຊີວິດ

1ພຣະຜູ້ເປັນເຈົ້າກ່າວກັບໂມເຊວ່າ, 2“ຈົ່ງກ່າວແກ່ອາໂຣນແລະພວກລູກຊາຍທັງຫລາຍຂອງ
ລາວ ແລະແກ່ບັນດາຄົນອິສຣາເອນວ່າ ຕໍ່ໄປນີ້ເປັນສິ່ງຊຶ່ງພຣະຜູ້ເປັນເຈົ້າໄດ້ສັ່ງໄວ້ວ່າ, 3ຖ້າ
ຄົນໃດໃນເຊື້ອສາຍອິສຣາເອນຂ້າງົວ ຫລືລູກແກະ ຫລືແບ້ໃນຄ້າຍ ຫລືຂ້າຢູ່ນອກຄ້າຍ 4ແລະ
ບໍ່ໄດ້ເອົາມາທີ່ປະຕູຫໍເຕັນແຫ່ງຊຸມນຸມເພື່ອຖວາຍເປັນຂອງບູຊາແດ່ພຣະຜູ້ເປັນເຈົ້າທີ່ໜ້າຫໍເຕັນ
ແຫ່ງ ພຣະຜູ້ເປັນເຈົ້າ ຜູ້ນັ້ນຕ້ອງມີໂທດດ້ວຍມີບາບເລື່ອງເລືອດ ຄືລາວເຮັດໃຫ້ເລືອດຕົກ ໃຫ້
ຕັດຜູ້ນັ້ນອອກຈາກຊົນຊາດຂອງຕົນ 5ທັງນີ້ກໍເພື່ອໃຫ້ຄົນອິສຣາເອນເອົາເຄື່ອງຖວາຍຊຶ່ງລາວ
ຂ້າທີ່ພື້ນທົ່ງນາມາຖວາຍແດ່ພຣະຜູ້ເປັນເຈົ້າມາຍັງປະໂລ ຫິດທີ່ປະຕູຫໍເຕັນແຫ່ງຊຸມນຸມ ແລະ
ເອົາສັດນັ້ນຖວາຍເພື່ອຄວາມສາມັກຄີທໍາແດ່ພຣະຜູ້ເປັນເຈົ້າ 6ແລະປະໂລຫິດຈະເອົາເລືອດສັດ
ນັ້ນມາຊິດໃສ່ເທິງແທ່ນບູຊາຂອງພຣະຜູ້ເປັນເຈົ້າທີ່ປະຕູຫໍເຕັນແຫ່ງຊຸມນຸມ ແລະເຜົາໄຂມັນໃຫ້

ເປັນກິ່ນຫອມທີ່ພໍພຣະໄທຖວາຍແດ່ພຣະຜູ້ເປັນເຈົ້າ 7ລາວຈະບໍ່ຖວາຍບູຊາແກ່ຜີອີກຕໍ່ໄປ ຊຶ່ງ
ພວກເຂົາທັງຫລາຍໄດ້ຫລິ້ນຊູ້ນັ້ນ ໃຫ້ເລື່ອງນີ້ເປັນກົດເກນແກ່ພວກເຂົາຕະຫລອດຊົ່ວອາຍຸຂອງ
ພວກເຂົາ

8ແລະເຈົ້າຈົ່ງກ່າວແກ່ພວກເຂົາວ່າ ເຊື້ອສາຍອິສຣາເອນຄົນໃດ ຫລືຄົນຕ່າງດ້າວຄົນໃດຜູ້ທີ່
ອາໄສຢູ່ໃນໝູ່ພວກເຈົ້າ ຜູ້ຖວາຍເຄື່ອງເຜົາບູຊາ ຫລືເຄື່ອງສັດບູຊາ 9ແລະບໍ່ໄດ້ເອົາເຄື່ອງບູຊາ
ນັ້ນມາທີ່ປະຕູຫໍເຕັນແຫ່ງຊຸມນຸມເພື່ອຖວາຍແດ່ພຣະຜູ້ເປັນເຈົ້າກໍໃຫ້ຕັດຜູ້ນັ້ນອອກຈາກຊົນຊາດ
ຂອງຕົນ

10ຖ້າເຊື້ອສາຍອິສຣາເອນຄົນໃດ ຫລືຄົນຕ່າງດ້າວຄົນໃດຜູ້ທີ່ອາໄສຢູ່ທ່າມກາງພວກເຈົ້າກິນ
ເລືອດຢ່າງໜຶ່ງຢ່າງໃດ ເຮົາຈະຕັ້ງໜ້າຂອງເຮົາຕໍ່ສູ້ຜູ້ກິນເລືອດນັ້ນ ແລະຈະຕັດຜູ້ນັ້ນອອກຈາກ
ຊົນຊາດຂອງຕົນ 11ເພາະວ່າຊີວິດກໍມີຢູ່ໃນເລືອດ ເຮົາໄດ້ໃຫ້ເລືອດແກ່ເຈົ້າເພື່ອໃຊ້ເທິງແທ່ນບູ-
ຊາ ເພື່ອເຮັດການໄຖ່ບາບແຫ່ງຈິດວິນຍານຂອງເຈົ້າ ເພາະວ່າເລືອດເປັນໂຕທີ່ເຮັດໃຫ້ຈິດວິນ
ຍານໄດ້ຫລຸດຈາກບາບ 12ເພາະສະນັ້ນ ເຮົາຈຶ່ງໄດ້ເວົ້າກັບຄົນອິສຣາເອນວ່າ ໃນພວກເຈົ້າຢ່າ
ໃຫ້ຄົນໃດກິນເລືອດເລີຍ ຫລືຄົນຕ່າງດ້າວຜູ້ອາໄສຢູ່ທ່າມກາງພວກເຈົ້າກໍຢ່າໄດ້ກິນເລືອດ

13ຄົນອິສຣາເອນຄົນໃດ ຫລືຄົນຕ່າງດ້າວທີ່ອາໄສຢູ່ທ່າມກາງພວກເຈົ້າ ທີ່ໄປຈັບສັດ ຫລື
ນົກເພື່ອເອົາມາກິນກໍໃຫ້ເອົາເລືອດອອກແລ້ວເອົາດິນຝັງໄວ້ 14ເພາະວ່າຊີວິດກໍມີຢູ່ໃນເລືອດ ຄື
ຊີວິດຂອງສິ່ງໃດໆກໍມີຢູ່ໃນເລືອດຂອງສິ່ງນັ້ນເອງ ເພາະສະນັ້ນ ເຮົາຈຶ່ງໄດ້ກ່າວແກ່ປະຊາຊົນ
ອິສຣາເອນວ່າ ເຈົ້າຢ່າກິນເລືອດຂອງເນື້ອໜັງໃດໆເລີຍ ເພາະວ່າຊີວິດຂອງເນື້ອໜັງກໍຄືເລືອດ
ນັ້ນເອງ ຖ້າຜູ້ໃດກິນກໍຕ້ອງຖືກຕັດອອກເສຍ

15ແລະທຸກຄົນ ບໍ່ວ່າຊາວເມືອງ ຫລືຄົນຕ່າງດ້າວ ຜູ້ທີ່ກິນສັດທີ່ຕາຍເອງ ຫລືສັດທີ່ຖືກສັດ
ອື່ນກັດຕາຍຕ້ອງຊັກເສື້ອຜ້າ ແລະອາບນ້ຳ ແລະຈະເປັນມົນທິນຢູ່ຈົນຮອດຕອນແລງ ແລ້ວຈຶ່ງ
ຈະສະອາດດີ 16ຖ້າລາວບໍ່ຊັກເສື້ອຜ້າ ຫລືອາບນ້ຳ ລາວຕ້ອງຮັບໂທດຕາມຄວາມຊົ່ວຊ້າຂອງ
ຕົນ”

# ບົດທີ 18

## ຊົງຫ້າມຄວາມຜິດຝ່າຍສິນລະທຳທຸກຢ່າງ

1ພຣະຜູ້ເປັນເຈົ້າກ່າວກັບໂມເຊວ່າ 2“ຈົ່ງກ່າວແກ່ຄົນອິສຣາເອນວ່າ ເຮົາຄືພຣະຜູ້ເປັນເຈົ້າ
ພຣະເຈົ້າຂອງເຈົ້າ 3ເຈົ້າທັງຫລາຍຢ່າເຮັດຕາມປະເພນີທີ່ພວກເຂົາເຮັດກັນໃນແຜ່ນດິນເອຢິບ
ຊຶ່ງເຈົ້າເຄີຍອາໄສຢູ່ນັ້ນ ແລະເຈົ້າຢ່າເຮັດຕາມປະເພນີທີ່ເຂົາເຮັດກັນໃນແຜ່ນດິນການາອານ
ຊຶ່ງເຮົາກຳລັງຈະພາເຈົ້າໄປນັ້ນ ເຈົ້າຢ່າປະພຶດຕາມກົດຂອງພວກເຂົາ 4ເຈົ້າທັງຫລາຍຈົ່ງເຮັດ
ຕາມຄຳສັ່ງຂອງເຮົາ ແລະຮັກສາພຣະບັນຍັດຂອງເຮົາ ແລະປະພຶດຕາມ ເຮົາຄືພຣະຜູ້ເປັນເຈົ້າ
ພຣະເຈົ້າຂອງເຈົ້າ 5ເພາະສະນັ້ນ ເຈົ້າທັງຫລາຍຈຶ່ງຕ້ອງຮັກສາພຣະບັນຍັດຂອງເຮົາ ແລະຄຳ
ສັ່ງຂອງເຮົາ ດ້ວຍການເຮັດຕາມ ນັ້ນແຫລະ ມະນຸດຈຶ່ງຈະມີຊີວິດຢູ່ໄດ້ ເຮົາຄືພຣະຜູ້ເປັນເຈົ້າ

6ຢ່າໃຫ້ຜູ້ຊາຍຄົນໃດຫຍັບເຂົ້າໃກ້ຜູ້ຍິງ ພີ່ນ້ອງຂອງຕົນເພື່ອມີເພດສຳພັນກັບເຂົາເຈົ້າ ເຮົາຄື

ພຣະຜູ້ເປັນເຈົ້າ [7]ເຈົ້າຢ່າເປີດຂອງລັບຂອງພໍ່ເຈົ້າ ຫລືຂອງແມ່ເຈົ້າ ແມ່ກໍເປັນແມ່ຂອງເຈົ້າ ເຈົ້າ
ຢ່າເປີດຂອງລັບຂອງແມ່ເຈົ້າ [8]ເຈົ້າຢ່າເປີດຂອງລັບຂອງເມຍຂອງພໍ່ເຈົ້າ ເພາະເປັນຂອງລັບ
ຂອງພໍ່ເຈົ້າ [9]ເຈົ້າຢ່າເປີດຂອງລັບຂອງເອື້ອຍ ຫລືນ້ອງສາວຂອງເຈົ້າ ຄືຂອງລູກສາວຂອງພໍ່
ເຈົ້າ ຫລືຂອງລູກສາວຂອງແມ່ເຈົ້າ ບໍ່ວ່າທີ່ເກີດໃນເຮືອນ ຫລືທີ່ເກີດຢູ່ຕ່າງຖິ່ນ [10]ເຈົ້າຢ່າເປີດ
ຂອງລັບຂອງລູກສາວຂອງລູກຊາຍເຈົ້າ ຫລືຂອງລູກສາວຂອງລູກສາວເຈົ້າ ເພາະວ່າຂອງລັບ
ຂອງພວກເຂົາກໍເປັນຂອງລັບຂອງເຈົ້າເອງ [11]ເຈົ້າຢ່າເປີດຂອງລັບຂອງລູກສາວຂອງເມຍຂອງພໍ່
ເຈົ້າ ຊຶ່ງເກີດຈາກພໍ່ເຈົ້າເອງ ເພາະວ່ານາງເປັນນ້ອງສາວ ຫລືເອື້ອຍຂອງເຈົ້າ [12]ເຈົ້າຢ່າເປີດ
ຂອງລັບຂອງອາຍິງ ຫລືຂອງປ້າ ເພາະນາງເປັນພີ່ນ້ອງຜູ້ຍິງທີ່ສະນິດຂອງພໍ່ເຈົ້າ [13]ເຈົ້າຢ່າເປີດ
ຂອງລັບຂອງປ້າ ຫລືນ້າສາວຂອງເຈົ້າ ເພາະນາງເປັນພີ່ນ້ອງຜູ້ຍິງທີ່ສະນິດຂອງແມ່ເຈົ້າ [14]ເຈົ້າ
ຢ່າເປີດຂອງລັບຂອງລຸງ ຫລືອາວຜູ້ຊາຍຂອງເຈົ້າ ຄືເຈົ້າຢ່າສົມສູ່ກັບເມຍຂອງລາວ ເພາະນາງ
ເປັນປ້າສະໃພ້ຫລືອາສະໃພ້ຂອງເຈົ້າ [15]ເຈົ້າຢ່າເປີດຂອງລັບຂອງລູກສະໃພ້ຂອງເຈົ້າ ນາງເປັນ
ເມຍລູກຊາຍເຈົ້າ ເຈົ້າຢ່າເປີດຂອງລັບຂອງນາງເລີຍ [16]ເຈົ້າຢ່າເປີດຂອງລັບຂອງເມຍຂອງອ້າຍ
ຫລືນ້ອງຊາຍຂອງເຈົ້າ ເພາະເປັນຂອງລັບຂອງພີ່ນ້ອງຜູ້ຊາຍຂອງເຈົ້າ [17]ເຈົ້າຢ່າເປີດຂອງລັບ
ຂອງສະຕີຄົນໃດ ແລະຂອງລູກສາວຂອງນາງ ແລະເຈົ້າຢ່າເອົາລູກສາວຂອງລູກຊາຍຂອງນາງ
ຫລືລູກສາວຂອງລູກສາວຂອງນາງໄປເປີດຂອງລັບ ເພາະວ່າລາວເປັນພີ່ນ້ອງຜູ້ຍິງທີ່ສະນິດ
ການເຮັດເຊັ່ນນັ້ນກໍເປັນການຊົ່ວຮ້າຍຫລາຍ [18]ແລະເຈົ້າຢ່າເປີດຂອງລັບຂອງເອື້ອຍ ຫລືນ້ອງ
ສາວຂອງເມຍມາເປັນຄູ່ແຂ່ງກັບເມຍ ເມື່ອເມຍຍັງມີຊີວິດຢູ່

[19]ຢ່າໃຫ້ໃຜເຂົ້າໃກ້ຜູ້ຍິງຄົນໃດໜຶ່ງເພື່ອເປີດທີ່ລັບຂອງນາງ ເມື່ອເປັນປະຈຳເດືອນ ກໍໃຫ້ນາງ
ຢູ່ຕ່າງຫາກ ເພາະ ຈະ ເປັນ ມົນທິນ ແກ່ລາວ [20]ເຈົ້າຢ່າສົມສູ່ກັບ ເມຍ ຂອງ ເພື່ອນບ້ານຂອງ ເຈົ້າ
ເພາະຈະເຮັດໃຫ້ຕົວເຈົ້າເປັນມົນທິນກັບນາງ [21]ເຈົ້າຢ່າຖວາຍເຊື້ອສາຍຂອງເຈົ້າໃຫ້ພະໂມເລັກ
ໂດຍໃຫ້ລຸຍໄຟ ແລະຢ່າເຮັດໃຫ້ພຣະນາມພຣະເຈົ້າຂອງເຈົ້າເສື່ອມເສຍກຽດ, ເຮົາຄືພຣະຜູ້-
ເປັນເຈົ້າ. [22]ຜູ້ຊາຍກັບຜູ້ຊາຍເຈົ້າຢ່າສົມສູ່ກັນຄືເຮັດກັບຜູ້ຍິງ ເປັນສິ່ງທີ່ໜ້າກຽດຊັງຫລາຍ
[23]ແລະເຈົ້າຢ່າສົມສູ່ກັບສັດເດຍລະສານ ການເຮັດເຊັ່ນນັ້ນຂອງຕົນຕ້ອງເປັນມົນທິນ ຫລືຢ່າໃຫ້
ຍິງຄົນໃດຍອມຕົວສົມສູ່ກັບສັດເດຍລະສານ ເພາະເປັນເລື່ອງການທີ່ບ້າຄັ່ງ

[24]ເຈົ້າທັງຫລາຍຢ່າເຮັດຕົວໃຫ້ເປັນມົນທິນດ້ວຍສິ່ງເຫລົ່ານີ້ເລີຍ ເພາະວ່າບັນດາປະຊາຊາດ
ທີ່ເຮົາໄດ້ໄລ່ໄປຕໍ່ໜ້າເຈົ້ານັ້ນ ກໍເປັນມົນທິນດ້ວຍສິ່ງທັງຫລາຍນີ້ແຫລະ [25]ແລະແຜ່ນດິນນັ້ນກໍ
ເປັນມົນທິນ ເຮົາຈຶ່ງຕ້ອງລົງໂທດຄວາມຊົ່ວຊ້າຂອງແຜ່ນດິນນັ້ນ ແລ້ວແຜ່ນດິນກໍຮາກເອົາພົນ-
ລະເມືອງຂອງຕົນອອກ [26]ແຕ່ເຈົ້າທັງຫລາຍຈະຕ້ອງຮັກສາກົດເກນຂອງເຮົາ ແລະຄຳຕັດສິນ
ຂອງເຮົາ ແລະຢ່າເຮັດສິ່ງທີ່ໜ້າກຽດຊັງເຫລົ່ານີ້ ບໍ່ວ່າເປັນຊາວເມືອງ ຫລືຄົນຕ່າງດ້າວຜູ້ອາໄສ
ຢູ່ໃນໝູ່ພວກເຈົ້າ [27](ປະຊາຊົນໃນແຜ່ນດິນຜູ້ຢູ່ກ່ອນເຈົ້າໄດ້ເຮັດບັນດາສິ່ງທີ່ໜ້າກຽດຊັງເຫລົ່ານີ້
ດັ່ງນັ້ນ ແຜ່ນດິນ ຈຶ່ງ ເປັນ ມົນທິນ) [28]ຢ້ານ ວ່າ ເມື່ອ ເຈົ້າ ທັງຫລາຍ ເຮັດ ໃຫ້ ແຜ່ນດິນ ເປັນ ມົນທິນ
ແຜ່ນດິນ ກໍ ຈະ ຮາກ ເຈົ້າ ອອກ ດັ່ງ ທີ່ ແຜ່ນດິນ ໄດ້ ຮາກ ປະຊາຊາດ ທີ່ຢູ່ ກ່ອນ ເຈົ້າ ອອກ ໄປ ນັ້ນ
[29]ເພາະຜູ້ໃດເຮັດສິ່ງທີ່ໜ້າກຽດຊັງເຫລົ່ານີ້ ໃຫ້ຕັດຜູ້ນັ້ນອອກຈາກຊົນຊາດຂອງຕົນ [30]ເຫດສະ-

ນັ້ນ ເຈົ້າທັງຫລາຍຈົ່ງປະຕິບັດຕາມພຣະບັນຍັດຂອງເຮົາ ຢ່າປະພຶດຕາມທຳນຽມອັນໜ້າກຽດຊັງ ຊຶ່ງພວກເຂົາປະພຶດກັນຢູ່ກ່ອນສະໄໝເຈົ້າ ແລະຢ່າເຮັດຕົວເຈົ້າໃຫ້ເປັນມົນທິນດ້ວຍສິ່ງເຫລົ່ານີ້ ເຮົາຄືພຣະຜູ້ເປັນເຈົ້າພຣະເຈົ້າຂອງພວກເຈົ້າ”

# ບົດທີ 19

## ບັນຍັດກ່ຽວກັບຄວາມບໍລິສຸດ ແລະ ຄວາມຍຸດຕິທຳ

[1]ພຣະຜູ້ເປັນເຈົ້າກ່າວກັບໂມເຊວ່າ [2]“ຈົ່ງກ່າວແກ່ບັນດາຊຸມນຸມຊົນອິສຣາເອນວ່າ ເຈົ້າທັງ-
ຫລາຍຈົ່ງເປັນຄົນບໍລິສຸດ ເພາະເຮົາຄືພຣະຜູ້ເປັນເຈົ້າພຣະເຈົ້າຂອງເຈົ້າເປັນຜູ້ບໍລິສຸດ [3]ເຈົ້າ
ທຸກຄົນຕ້ອງເຄົາລົບແມ່ ແລະພໍ່ຂອງຕົນ ແລະເຈົ້າຕ້ອງຮັກສາວັນສະບາໂຕຂອງເຮົາ ເຮົາຄື
ພຣະຜູ້ເປັນເຈົ້າພຣະເຈົ້າຂອງພວກເຈົ້າ [4]ຢ່າໃຫ້ຜູ້ໃດຄຳນັບຮູບເຄົາລົບ ຫລືຢ່າຫລໍ່ພະໄວ້ເປັນ
ຮູບເຄົາລົບສຳລັບຕົນ ເຮົາຄືພຣະຜູ້ເປັນເຈົ້າພຣະເຈົ້າຂອງເຈົ້າ

[5]ເມື່ອເຈົ້າຖວາຍເພື່ອຄວາມສາມັກຄີທຳແດ່ພຣະຜູ້ເປັນເຈົ້າ ຈົ່ງຖວາຍດ້ວຍຄວາມເຕັມໃຈ
[6]ເຈົ້າຈົ່ງກິນເຄື່ອງບູຊານັ້ນໃນມື້ທີ່ເຈົ້າຖວາຍບູຊາ ຫລືໃນມື້ຮຸ່ງເຊົ້າ ຖ້າມີສ່ວນໃດເຫລືອຢູ່ຈົນ
ຮອດມື້ທີສາມ ຈົ່ງເອົາໄປເຜົາໄຟເສຍ [7]ຖ້າເອົາເຄື່ອງບູຊານັ້ນມາກິນໃນມື້ທີສາມກໍເປັນໜ້າກຽດ
ຊັງ ບໍ່ເປັນທີ່ພໍພຣະໄທ [8]ແລະທຸກຄົນທີ່ກິນເຄື່ອງບູຊານັ້ນຕ້ອງຮັບໂທດຕາມຄວາມຊົ່ວຊ້າຂອງ
ລາວ ເພາະລາວໄດ້ເຮັດສິ່ງບໍລິສຸດຂອງພຣະຜູ້ເປັນເຈົ້າໃຫ້ເປັນມົນທິນ ໃຫ້ຕັດຜູ້ນັ້ນອອກຈາກ
ຊົນຊາດຂອງຕົນ

[9]ເມື່ອເຈົ້າທັງຫລາຍກ່ຽວເຂົ້າໃນນາ ຢ່າກ່ຽວເກັບເຂົ້າທີ່ຂອບນາໃຫ້ໝົດ ເມື່ອກ່ຽວແລ້ວກໍຢ່າ
ເກັບເຂົ້າທີ່ຕົກນຳ [10]ໃນສວນໝາກອະງຸ່ນຢ່າເກັບໝາກອະງຸ່ນໃຫ້ໝົດ ເຈົ້າຢ່າເກັບອະງຸ່ນທີ່ຕົກ
ໃນສວນຂອງເຈົ້າ ຈົ່ງເຫລືອໄວ້ໃຫ້ຄົນຍາກຈົນ ແລະຄົນຕ່າງດ້າວມາເກັບເອົາ ເຮົາຄືພຣະຜູ້-
ເປັນເຈົ້າພຣະເຈົ້າຂອງເຈົ້າ

[11]ເຈົ້າຢ່າລັກຊັບ ຫລືສໍ້ໂກງ ຫລືຂີ້ຕົວະຕໍ່ກັນແລະກັນ [12]ຢ່າສາບານອອກນາມຂອງເຮົາ
ເປັນຄວາມບໍ່ຈິງ ຫລືເຮັດໃຫ້ພຣະນາມພຣະເຈົ້າຂອງເຈົ້າເປັນທີ່ໝິ່ນປະໝາດ ເຮົາຄືພຣະຜູ້-
ເປັນເຈົ້າ [13]ເຈົ້າຢ່າສໍ້ໂກງເພື່ອນບ້ານ ຫລືປຸ້ນເຄື່ອງຂອງພວກເຂົາ ຢ່າໃຫ້ຄ່າຈ້າງຂອງລູກຈ້າງ
ຄ້າງຢູ່ກັບເຈົ້າຈົນເຖິງຮຸ່ງເຊົ້າ [14]ເຈົ້າຢ່າສາບແຊ່ງຄົນຫູໜວກ ຫລືວາງສິ່ງຂອງໃຫ້ຄົນຕາບອດ
ເຕະສະດຸດ ແຕ່ເຈົ້າຈົ່ງຢຳເກງພຣະເຈົ້າຂອງເຈົ້າ ເຮົາຄືພຣະຜູ້ເປັນເຈົ້າ

[15]ເຈົ້າຢ່າພິພາກສາດ້ວຍຄວາມອະຍຸຕິທຳ ເຈົ້າຢ່າເລືອກໜ້າຄົນຍາກຈົນ ຫລືເຫັນແກ່ໜ້າຜູ້
ຮັ່ງມີ ແຕ່ເຈົ້າຈົ່ງພິພາກສາເພື່ອນບ້ານຂອງເຈົ້າດ້ວຍຄວາມຊອບທຳ [16]ຢ່າທຽວຂຶ້ນທຽວລົງຄອຍ
ຖ້າເວົ້ານິນທາໃນທ່າມກາງຊົນຊາດຂອງຕົນ ແລະຢ່າປອງຮ້າຍຕໍ່ເລືອດຂອງເພື່ອນບ້ານ ເຮົາຄື
ພຣະຜູ້ເປັນເຈົ້າ [17]ຢ່າກຽດຊັງພີ່ນ້ອງຂອງເຈົ້າຢູ່ໃນໃຈ ແຕ່ເຈົ້າຈົ່ງຕັກເຕືອນເພື່ອນບ້ານຂອງ
ເຈົ້າ ເພື່ອເຈົ້າຈະບໍ່ຕ້ອງຮັບໂທດເພາະພວກເຂົາ [18]ເຈົ້າຢ່າແກ້ແຄ້ນ ຫລືກໍ່ເຫດໃຫ້ລູກຫລານ
ຍາດພີ່ນ້ອງຂອງເຈົ້າ ແຕ່ເຈົ້າຈົ່ງຮັກເພື່ອນບ້ານເໝືອນຮັກຕົນເອງ ເຮົາຄືພຣະຜູ້ເປັນເຈົ້າ
[19]ເຈົ້າຈົ່ງຮັກສາກົດເກນຂອງເຮົາ ເຈົ້າຢ່າປະສົມສັດຂອງເຈົ້າກັບສັດປະເພດອື່ນ ເຈົ້າຢ່າຫວ່ານ

ພືດປົນກັນສອງຊະນິດໃນນາຂອງເຈົ້າ ຢ່າໃຊ້ເຄື່ອງແຕ່ງກາຍທີ່ເຮັດດ້ວຍຂົນສັດປົນດ້ວຍຜ້າ
ປ່ານ

[20]ຖ້າຊາຍຜູ້ໃດນອນກັບຜູ້ຍິງທີ່ເປັນຂ້າທາດທີ່ຊາຍອີກຄົນໜຶ່ງສູ່ຂໍໄວ້ແລ້ວແຕ່ຍັງບໍ່ໄດ້ໄຖ່
ຖອນ ຫລືປ່ອຍເປັນອິດສະຫລະ ຕ້ອງລົງໂທດນາງ ແຕ່ຢ່າໃຫ້ເຖິງຕາຍ ເພາະວ່າທາດນັ້ນຍັງບໍ່
ເປັນອິດສະຫລະ [21]ແຕ່ໃຫ້ຜູ້ນັ້ນເອົາເຄື່ອງບູຊາໄຖ່ຄວາມຜິດສຳລັບຕົວຂອງລາວມາຖວາຍແດ່
ພຣະຜູ້ເປັນເຈົ້າທີ່ປະຕູຫໍເຕັນແຫ່ງຊຸມນຸມ ຄືແກະຜູ້ໂຕໜຶ່ງເປັນເຄື່ອງບູຊາໄຖ່ຄວາມຜິດ [22]ແລະ
ປະໂລຫິດຈະເຮັດການໄຖ່ບາບຂອງລາວດ້ວຍການຖວາຍແກະຜູ້ໂຕນັ້ນເປັນເຄື່ອງບູຊາໄຖ່
ຄວາມຜິດຕໍ່ພຣະພັກພຣະຜູ້ເປັນເຈົ້າ ເພາະບາບຊຶ່ງລາວໄດ້ເຮັດ ແລະໃຫ້ລາວໄດ້ຮັບການອະ-
ໄພບາບຈາກສິ່ງທີ່ລາວໄດ້ເຮັດໄປນັ້ນ

[23]ເມື່ອເຈົ້າເຂົ້າໄປໃນແຜ່ນດິນ ແລະປູກຕົ້ນໄມ້ທຸກຊະນິດທີ່ມີຜົນເປັນອາຫານ ຜົນທີ່ໄດ້ນັ້ນ
ຕ້ອງເປັນຜົນທີ່ຕ້ອງຫ້າມ ພາຍໃນສາມປີເປັນຜົນທີ່ຕ້ອງຫ້າມແກ່ເຈົ້າ ເຈົ້າຢ່າກິນເລີຍ [24]ແລະປີ
ທີສີ່ ຜົນທີ່ໄດ້ທັງໝົດຈະເປັນຂອງບໍລິສຸດເພື່ອໃຊ້ໃນການສັນລະເສີນພຣະຜູ້ເປັນເຈົ້າ [25]ແຕ່ໃນ
ປີທີຫ້າເຈົ້າຈຶ່ງກິນໝາກໄມ້ນັ້ນໄດ້ ເພື່ອຈະບັງເກີດຜົນທະວີຂຶ້ນສຳລັບເຈົ້າ ເຮົາຄືພຣະຜູ້ເປັນ-
ເຈົ້າພຣະເຈົ້າຂອງເຈົ້າ

[26]ເຈົ້າຢ່າກິນຊີ້ນສັດທີ່ມີເລືອດໃນຊີ້ນນັ້ນ ເຈົ້າຢ່າເປັນໝໍຜີ ຫລືໝໍມໍ [27]ເຈົ້າຢ່າຕັດຜົມທີ່ຈອນ
ຫູ ຫລືແຖແຄມໜວດຂອງເຈົ້າ [28]ເຈົ້າຢ່າປາດຊີ້ນຂອງເຈົ້າເພາະເຫດມີຄົນຕາຍ ຫລືເຮັດເປັນ
ເຄື່ອງໝາຍໃດໆລົງໃນຕົວເຈົ້າ ເຮົາຄືພຣະຜູ້ເປັນເຈົ້າ [29]ຢ່າເຮັດລູກສາວຂອງຕົນໃຫ້ເປັນມົນ-
ທິນດ້ວຍໃຫ້ເປັນຍິງໂສເພນີ ຢ້ານວ່າແຜ່ນດິນນັ້ນຈະເປັນບ່ອນໂສເພນີ ແລະແຜ່ນດິນຈະເຕັມ
ໄປດ້ວຍຄວາມຊົ່ວຮ້າຍອັນໜ້າອັບອາຍ

[30]ເຈົ້າຈົ່ງຮັກສາວັນສະບາໂຕທັງຫລາຍຂອງເຮົາ ແລະເຄົາລົບຕໍ່ສະຖານທີ່ບໍລິສຸດຂອງເຮົາ
ເຮົາຄືພຣະຜູ້ເປັນເຈົ້າ [31]ຢ່າໄປຫາໝໍເຢົາ ຫລືໝໍມໍ ຢ່າທ່ຽວຄົ້ນຫາໃຫ້ຕົນເປັນມົນທິນໄປຍ້ອນ
ພວກເຂົາ ເຮົາຄືພຣະຜູ້ເປັນເຈົ້າພຣະເຈົ້າຂອງເຈົ້າ [32]ເຈົ້າຈົ່ງລຸກຂຶ້ນຄຳນັບຄົນຜົມຫງອກ
ແລະເຄົາລົບຕໍ່ໜ້າຄົນເຖົ້າແກ່ ແລະຈົ່ງຢຳເກງພຣະເຈົ້າຂອງເຈົ້າ ເຮົາຄືພຣະຜູ້ເປັນເຈົ້າ
[33]ເມື່ອຄົນຕ່າງດ້າວອາໄສຢູ່ກັບເຈົ້າໃນແຜ່ນດິນຂອງເຈົ້າ ຢ່າຂົ່ມເຫງພວກເຂົາ [34]ຄົນຕ່າງດ້າວ
ທີ່ອາໄສຢູ່ກັບເຈົ້ານັ້ນກໍເໝືອນກັບຊາວເມືອງຂອງເຈົ້າ ເຈົ້າຈົ່ງຮັກພວກເຂົາເໝືອນກັບຮັກຕົນ
ເອງ ເພາະວ່າເຈົ້າເຄີຍເປັນຄົນຕ່າງດ້າວໃນແຜ່ນດິນເອຢິບ ເຮົາຄືພຣະຜູ້ເປັນເຈົ້າພຣະເຈົ້າ
ຂອງເຈົ້າ [35]ເຈົ້າຢ່າເຮັດຜິດໃນການພິພາກສາ ໃນການວັດແທກລວງຍາວ ຫລືຊັ່ງນ້ຳໜັກ ຫລື
ນັບຈຳນວນກໍດີ [36]ເຈົ້າຈົ່ງໃຊ້ຕາຊັ່ງຢ່າງທ່ຽງທຳ ໝາກໂຕ້ນທ່ຽງທຳ ເອຟາທ່ຽງທຳ ແລະຫະ-
ນາຍທ່ຽງທຳ ເຮົາຄືພຣະຜູ້ເປັນເຈົ້າພຣະເຈົ້າຂອງເຈົ້າ ຜູ້ໄດ້ພາເຈົ້າອອກມາຈາກແຜ່ນດິນເອ-
ຢິບ [37]ດັ່ງນີ້ແຫລະ ເຈົ້າຈົ່ງຮັກສາກົດເກນທັງໝົດຂອງເຮົາ ແລະຄຳຕັດສິນຂອງເຮົາທັງໝົດ
ຈົ່ງເຮັດຕາມ ເຮົາຄືພຣະຜູ້ເປັນເຈົ້າ”

# ບົດທີ 20

## ໂທດສຳລັບການຜິດສິນລະທຳ

[1]ພຣະຜູ້ເປັນເຈົ້າກ່າວກັບໂມເຊວ່າ [2]“ຈົ່ງກ່າວແກ່ຄົນອິສຣາເອນຊ້ຳອີກວ່າ ຄົນອິສຣາເອນ
ຄົນໃດ ຫລືຄົນຕ່າງດ້າວຄົນໃດທີ່ອາໄສຢູ່ໃນອິສຣາເອນ ຜູ້ທີ່ມອບເຊື້ອສາຍຂອງຕົນໃຫ້ແກ່
ພະໂມເລັກ ຜູ້ນັ້ນຕ້ອງມີໂທດເຖິງຕາຍ ໃຫ້ປະຊາຊົນແຫ່ງແຜ່ນດິນເອົາຫີນຂວ່າງລາວໃຫ້ຕາຍ
[3]ແລະເຮົາຈະຕັ້ງໜ້າຂອງເຮົາຕໍ່ສູ້ຜູ້ນັ້ນ ແລະຈະຕັດລາວອອກຈາກທ່າມກາງຊົນຊາດຂອງຕົນ
ເພາະວ່າລາວໄດ້ໃຫ້ເຊື້ອສາຍຂອງລາວແກ່ພະໂມເລັກ ເຮັດໃຫ້ສະຖານທີ່ບໍລິສຸດຂອງເຮົາເປັນ
ມົນທິນ ແລະເຮັດໃຫ້ນາມອັນບໍລິສຸດຂອງເຮົາເປັນທີ່ໝິ່ນປະໝາດ [4]ແລະຖ້າປະຊາຊົນໃນແຜ່ນ-
ດິນນັ້ນບໍ່ສົນໃຈທີ່ຈະຂ້າຄົນທີ່ມອບເຊື້ອສາຍຂອງຕົນແກ່ພະໂມເລັກ [5]ເຮົາຈະຕັ້ງໜ້າຂອງເຮົາ
ຕໍ່ສູ້ຜູ້ນັ້ນ ແລະຕໍ່ສູ້ກັບຄອບຄົວຂອງຜູ້ນັ້ນ ແລະຈະຕັດລາວອອກຈາກຊົນຊາດຂອງຕົນ ທັງຕົວ
ລາວກໍດີ ແລະຜູ້ໃດທີ່ເຮັດຕາມລາວໃນການຫລິ້ນຊູ້ກັບພະໂມເລັກກໍດີ

[6]ຜູ້ໃດໃຝ່ຫາໝໍຜີຫລືໝໍມໍ ຫລິ້ນຊູ້ກັບພວກເຂົາ ເຮົາຈະຕັ້ງໜ້າຂອງເຮົາຕໍ່ສູ້ຜູ້ນັ້ນ ແລະຈະຕັດ
ຜູ້ນັ້ນອອກຈາກຊົນຊາດຂອງຕົນ

[7]ເຫດສະນັ້ນ ເຈົ້າຈົ່ງຊຳລະຕົວໃຫ້ບໍລິສຸດ ເພາະເຮົາຄືພຣະຜູ້ເປັນເຈົ້າພຣະເຈົ້າຂອງເຈົ້າ
[8]ຈົ່ງຮັກສາກົດເກນຂອງເຮົາ ແລະເຮັດຕາມ ເຮົາຄືພຣະຜູ້ເປັນເຈົ້າຜູ້ຕັ້ງເຈົ້າໄວ້ໃຫ້ບໍລິສຸດ

[9]ເພາະວ່າທຸກຄົນທີ່ສາບແຊ່ງພໍ່ ຫລືແມ່ຂອງຕົນຈະຕ້ອງມີໂທດເຖິງຕາຍ ຫາກລາວໄດ້ສາບ
ແຊ່ງພໍ່ ຫລືແມ່ຂອງລາວ ກໍໃຫ້ເລືອດຂອງຜູ້ນັ້ນຕົກຢູ່ເທິງຜູ້ນັ້ນເອງ [10]ຖ້າຜູ້ໃດຮ່ວມປະເວນີກັບ
ເມຍຂອງຜູ້ອື່ນ ຄືລາວໄດ້ຮ່ວມປະເວນີກັບເມຍຂອງເພື່ອນບ້ານ ຕ້ອງໃຫ້ຜູ້ຮ່ວມປະເວນີທັງຊາຍ
ແລະຍິງນັ້ນມີໂທດເຖິງຕາຍ [11]ຜູ້ໃດນອນກັບເມຍຂອງພໍ່ຂອງຕົນ ຄືຜູ້ນັ້ນໄດ້ເປີດຂອງຂອງລັບ
ຂອງພໍ່ຂອງຕົນ ຕ້ອງໃຫ້ທັງສອງຄົນນັ້ນມີໂທດເຖິງຕາຍ ໃຫ້ເລືອດຂອງຜູ້ນັ້ນຕົກຢູ່ເທິງຜູ້ນັ້ນ
ເອງ [12]ຖ້າຜູ້ໃດນອນກັບລູກສະໃພ້ ຕ້ອງໃຫ້ທັງສອງຄົນນັ້ນມີໂທດເຖິງຕາຍ ເພາະພວກເຂົາໄດ້
ເຮັດການທີ່ບ້າຄັ່ງ ໃຫ້ເລືອດຂອງຜູ້ນັ້ນຕົກຢູ່ເທິງຜູ້ນັ້ນເອງ [13]ຖ້າຊາຍຜູ້ໜຶ່ງນອນກັບຜູ້ຊາຍອີກຜູ້
ໜຶ່ງເຮັດຄືກັບຜູ້ຍິງທັງສອງຄົນເຮັດຜິດໃນສິ່ງອັນໜ້າກຽດຊັງ ຕ້ອງໃຫ້ທັງສອງຄົນນັ້ນມີໂທດ
ເຖິງຕາຍ ໃຫ້ເລືອດຂອງຜູ້ນັ້ນຕົກຢູ່ເທິງຜູ້ນັ້ນເອງ [14]ແລະຖ້າຊາຍໃດໄດ້ເມຍ ແລະໄດ້ແມ່ຂອງ
ນາງມາເປັນເມຍດ້ວຍ ຊຶ່ງເປັນເລື່ອງທີ່ຊົ່ວຫລາຍ ໃຫ້ເຜົາທັງຜູ້ຊາຍແລະຍິງທັງສອງຄົນນັ້ນ
ດ້ວຍໄຟ ເພື່ອວ່າຈະບໍ່ມີຄວາມຊົ່ວຮ້າຍໃນໝູ່ພວກເຈົ້າ [15]ຖ້າຊາຍໃດສົມສູ່ກັບສັດເດຍລະສານ
ຕ້ອງໃຫ້ຜູ້ຊາຍຄົນນັ້ນມີໂທດເຖິງຕາຍ ແລະເຈົ້າຈົ່ງຂ້າສັດເດຍລະສານນັ້ນໃຫ້ຕາຍດ້ວຍ [16]ຖ້າ
ຍິງຄົນໃດເຂົ້າໃກ້ສັດເດຍລະສານ ແລະນອນກັບມັນ ເຈົ້າຈົ່ງຂ້າຜູ້ຍິງນັ້ນ ແລະສັດເດຍລະສານ
ນັ້ນໃຫ້ຕາຍ ທັງສອງຕ້ອງມີໂທດເຖິງຕາຍ ໃຫ້ເລືອດຂອງຜູ້ນັ້ນຕົກຢູ່ເທິງຜູ້ນັ້ນເອງ

[17]ຖ້າຊາຍໃດພາເອື້ອຍ ຫລືນ້ອງສາວຂອງຕົນ ຄືລູກສາວຂອງພໍ່ ຫລືລູກສາວຂອງແມ່ ແລະ
ເບິ່ງຂອງລັບຂອງນາງ ແລະນາງກໍເບິ່ງຂອງລັບຂອງຕົນ ເປັນສິ່ງທີ່ໜ້າອັບອາຍຫລາຍ ຈະ
ຕ້ອງຕັດພວກເຂົາອອກຈາກສາຍຕາຂອງຊົນຊາດຂອງເຂົາເຈົ້າ ເພາະພວກເຂົາໄດ້ເປີດຂອງລັບ
ຂອງເອື້ອຍນ້ອງສາວຂອງຕົນ ພວກເຂົາຕ້ອງຮັບໂທດຄວາມຊົ່ວຊ້າຂອງເຂົາ [18]ຖ້າຊາຍໃດ

ນອນກັບຍິງຜູ້ມີປະຈຳເດືອນ ແລະເປີດຂອງລັບຂອງນາງ ລາວໄດ້ເຮັດໃຫ້ເລືອດຂອງນາງໄຫລ
ສ່ວນນາງກໍປ່ອຍໃຫ້ເລືອດຂອງນາງໄຫລ ໃຫ້ຕັດພວກເຂົາທັງສອງຄົນອອກຈາກຊົນຊາດຂອງ
ເຂົາເຈົ້າ 19ເຈົ້າຢ່າເປີດຂອງລັບຂອງເອື້ອຍ ຫລືນ້ອງສາວແມ່ເຈົ້າ ຫລືເອື້ອຍນ້ອງສາວຂອງພໍ່
ເຈົ້າ ເພາະເຮັດເຊັ່ນນັ້ນເຈົ້າໄດ້ເປີດຂອງລັບຂອງຍາດສະນິດ ເຈົ້າຕ້ອງໄດ້ຮັບໂທດຄວາມຊົ່ວ-
ຊ້າຂອງເຈົ້າ 20ຖ້າຊາຍໃດນອນກັບເມຍຂອງລຸງ ລາວໄດ້ເປີດຂອງລັບຂອງລຸງ ທັງສອງຈະ
ຕ້ອງຮັບໂທດເພາະບາບຂອງພວກເຂົາ ເຂົາເຈົ້າຈະຕາຍໂດຍບໍ່ມີລູກ 21ຖ້າຊາຍໃດເອົາເມຍ
ຂອງອ້າຍ ຫລືນ້ອງຊາຍໄປ ກໍເປັນການຊົ່ວລາມົກ ລາວໄດ້ເປີດຂອງລັບຂອງອ້າຍ ຫລືນ້ອງ
ຊາຍ ລາວຈະຕ້ອງບໍ່ມີລູກ

22ເພາະສະນັ້ນ ເຈົ້າຈົ່ງຮັກສາກົດເກນທັງໝົດຂອງເຮົາ ແລະຄຳຕັດສິນທັງໝົດຂອງເຮົາ
ແລະເຮັດຕາມເພື່ອວ່າແຜ່ນດິນຊຶ່ງເຮົາເອົາໃຫ້ເຈົ້າຢູ່ນັ້ນຈະບໍ່ໄດ້ຄາຍເຈົ້າໃຫ້ອອກໄປ 23ແລະ
ເຈົ້າຢ່າປະພຶດຕາມທຳນຽມຂອງປະຊາຊາດທີ່ເຮົາໄລ່ໄປໃຫ້ພົ້ນໜ້າເຈົ້າ ດ້ວຍວ່າພວກເຂົາທັງ-
ຫລາຍໄດ້ປະພຶດຜິດໃນສິ່ງທັງປວງເຫລົ່ານີ້ ເຮົາຈຶ່ງກຽດຊັງພວກເຂົາ

## ແຜ່ນດິນທີ່ມີນໍ້ານົມ ແລະນໍ້າເຜິ້ງໄຫລບໍລິບູນ

24ແຕ່ເຮົາໄດ້ບອກເຈົ້າແລ້ວວ່າ ເຈົ້າທັງຫລາຍຈະໄດ້ຮັບແຜ່ນດິນນີ້ເປັນມໍລະດົກ ເຮົາຈະໃຫ້
ແກ່ເຈົ້າເປັນກຳມະສິດ ເປັນແຜ່ນດິນທີ່ມີນໍ້ານົມ ແລະນໍ້າເຜິ້ງໄຫລບໍລິບູນ ເຮົາຄືພຣະຜູ້ເປັນ-
ເຈົ້າພຣະເຈົ້າຂອງເຈົ້າ ຜູ້ໄດ້ແຍກເຈົ້າອອກຈາກຊົນຊາດທັງຫລາຍ 25ເຫດສະນັ້ນ ເຈົ້າຈົ່ງສັງ-
ເກດຄວາມແຕກຕ່າງລະຫວ່າງສັດສະອາດ ແລະສັດເປັນມົນທິນ ລະຫວ່າງນົກເປັນມົນທິນແລະ
ນົກສະອາດ ເຈົ້າຢ່າເຮັດຕົວເຈົ້າໃຫ້ເປັນທີ່ກຽດຊັງດ້ວຍສັດ ຫລືນົກ ຫລືສິ່ງໃດໆທີ່ມີຊີວິດທີ່ເລືອ
ຄານຢູ່ເທິງໜ້າດິນ ຊຶ່ງເຮົາໄດ້ແຍກໃຫ້ເຈົ້າຮູ້ແລ້ວວ່າເປັນມົນທິນ 26ເຈົ້າຕ້ອງບໍລິສຸດສຳລັບເຮົາ
ເພາະເຮົາຄືພຣະຜູ້ເປັນເຈົ້າຜູ້ບໍລິສຸດ ແລະໄດ້ແຍກເຈົ້າອອກຈາກຊົນຊາດທັງຫລາຍເພື່ອເຈົ້າ
ຈະເປັນຂອງເຮົາ

27ຊາຍ ຫລືຍິງຄົນໃດທີ່ເປັນໝໍເຢົາ ຫລືໝໍມໍ ຈົ່ງເອົາກ້ອນຫີນຂວ້າງໃຫ້ຕາຍ ໃຫ້ເລືອດຂອງ
ຜູ້ນັ້ນຕົກຢູ່ເທິງຜູ້ນັ້ນເອງ”

# ບົດທີ 21

## ພຶດຕິກຳ ແລະຄຸນສົມບັດຂອງພວກປະໂລຫິດ

1ພຣະຜູ້ເປັນເຈົ້າກ່າວກັບໂມເຊວ່າ “ຈົ່ງກ່າວແກ່ບັນດາປະໂລຫິດ ຄືລູກຫລານຂອງອາໂຣນ
ແລະສັ່ງພວກເຂົາວ່າ ຢ່າໃຫ້ຜູ້ໃດເຮັດຕົວໃຫ້ເປັນມົນທິນດ້ວຍເລື່ອງສົບໃນໝູ່ປະຊາຊົນ 2ເວັ້ນ
ແຕ່ພີ່ນ້ອງສະນິດທີ່ສຸດຄື ແມ່ ພໍ່ ລູກຊາຍຍິງ ອ້າຍນ້ອງຊາຍ 3ຫລືເອື້ອຍນ້ອງສາວພົມມະຈາລີ
ຜູ້ທີ່ຍັງສະນິດກັບພວກເຂົາ ເພາະນາງຍັງບໍ່ມີຜົວ ພວກເຂົາຈຶ່ງຍອມເປັນມົນທິນເພາະນາງໄດ້
4ຢ່າໃຫ້ພວກເຂົາມີມົນທິນຄືເຮັດໃຫ້ຕົນເອງເປັນມົນທິນ ເພາະພວກເຂົາເປັນຜູ້ໃຫຍ່ໃນໝູ່ຊົນ
ຊາດຂອງຕົນ 5ຫ້າມບໍ່ໃຫ້ພວກເຂົາທັງຫລາຍແຖຫົວ ຫລືແຖໜວດ ຫລືປາດຊີ້ນຕົວເອງ

6ພວກປະໂລຫິດຕ້ອງເປັນຄົນບໍລິສຸດຕໍ່ພຣະເຈົ້າຂອງຕົນ ແລະບໍ່ເຮັດໃຫ້ພຣະນາມຂອງ

ພຣະເຈົ້າ ເປັນທີ່ໝິ່ນປະໝາດ  ເພາະພວກເຂົາທັງຫລາຍຖວາຍເຄື່ອງບູຊາດ້ວຍໄຟແດ່ພຣະຜູ້-
ເປັນເຈົ້າ ແລະອາຫານແຫ່ງພຣະເຈົ້າຂອງພວກເຂົາທັງຫລາຍ ເພາະສະນັ້ນ ພວກເຂົາຈຶ່ງຕ້ອງ
ບໍລິສຸດ [7]ປະໂລຫິດຈະແຕ່ງງານກັບຍິງໂສເພນີ ຫລືຍິງທີ່ມີມົນທິນບໍ່ໄດ້ ຫລືຈະແຕ່ງງານກັບຍິງ
ທີ່ປະຮ້າງຈາກຜົວກໍບໍ່ໄດ້ ເພາະປະໂລຫິດຈະຕ້ອງບໍລິສຸດຕໍ່ພຣະເຈົ້າຂອງພວກເຂົາ [8]ເຈົ້າຈົ່ງ
ຊຳລະພວກເຂົາໃຫ້ບໍລິສຸດ ເພາະພວກເຂົາຈະຖວາຍອາຫານຕໍ່ພຣະເຈົ້າຂອງເຈົ້າ ພວກເຂົາຈະ
ຕ້ອງບໍລິສຸດສຳລັບເຈົ້າ ເພາະເຮົາຄືພຣະຜູ້ເປັນເຈົ້າ ຜູ້ຊຳລະເຈົ້າທັງຫລາຍໃຫ້ບໍລິສຸດ ເພາະ
ເຮົາບໍລິສຸດ [9]ລູກສາວຂອງປະໂລຫິດຄົນໃດ ຖ້ານາງເຮັດຕົວໃຫ້ເປັນມົນທິນໂດຍໄປເປັນຍິງ
ໂສເພນີກໍຈະເຮັດໃຫ້ພໍ່ເປັນມົນທິນ ຈະຕ້ອງເຜົານາງດ້ວຍໄຟ

[10]ແລະຜູ້ທີ່ເປັນມະຫາປະໂລຫິດໃນໝູ່ພວກພີ່ນ້ອງ ຜູ້ຖືກເຈີມຫົວດ້ວຍນ້ຳມັນ ແລະຜູ້ທີ່ໄດ້ຮັບ
ການສະຖາປະນາໃຫ້ນຸ່ງເສື້ອຍົດ ຢ່າປ່ອຍຜົມ ຫລືຈີກເສື້ອຜ້າຂອງຕົນ [11]ຢ່າໃຫ້ເຂົາເຈົ້າເຂົ້າໄປ
ແຕະຕ້ອງສົບ ຫລືເຮັດຕົວໃຫ້ເປັນມົນທິນ ເຖິງວ່າສົບນັ້ນເປັນພໍ່ ຫລືແມ່ຂອງພວກເຂົາກໍຕາມ
[12]ຢ່າໃຫ້ພວກເຂົາອອກໄປຈາກສະຖານທີ່ບໍລິສຸດ ຫລືເຮັດໃຫ້ສະຖານທີ່ບໍລິສຸດຂອງພຣະເຈົ້າ
ເປັນມົນທິນເພາະການສະຖາປະນາດ້ວຍນ້ຳມັນເຈີມຂອງພຣະເຈົ້າກໍຢູ່ເທິງຕົວເຂົາ ເຮົາຄືພຣະ-
ຜູ້ເປັນເຈົ້າ [13]ເຂົາເຈົ້າຈະຕ້ອງມີເມຍເປັນຍິງພົມມະຈາລີ [14]ຢ່າໃຫ້ພວກເຂົາແຕ່ງງານກັບແມ່-
ໝ້າຍ ແມ່ຮ້າງ ຍິງທີ່ມີມົນທິນ ຫລືຍິງໂສເພນີ ເຂົາເຈົ້າຈະຕ້ອງຫາຍິງພົມມະຈາລີໃນຊົນຊາດ
ຂອງຕົນມາເປັນເມຍ [15]ເພື່ອເຂົາເຈົ້າຈະບໍ່ໄດ້ເຮັດໃຫ້ເຊື້ອສາຍຂອງຕົນໃນໝູ່ຊົນຊາດເປັນມົນ-
ທິນ ເພາະເຮົາຄືພຣະຜູ້ເປັນເຈົ້າຜູ້ໄດ້ຕັ້ງພວກເຂົາໄວ້ໃຫ້ບໍລິສຸດ”

[16]ພຣະຜູ້ເປັນເຈົ້າກ່າວກັບໂມເຊວ່າ [17]“ຈົ່ງກ່າວແກ່ອາໂຣນວ່າ ໃນບັນດາເຊື້ອສາຍຂອງ
ເຈົ້າຕະຫລອດທຸກຊົ່ວອາຍຸຂອງພວກເຂົາທັງຫລາຍ ຢ່າໃຫ້ຄົນພິການເຂົ້າໄປຖວາຍອາຫານຕໍ່
ພຣະເຈົ້າຂອງເຂົາເຈົ້າ [18]ເພາະວ່າຜູ້ໃດທີ່ມີຕຳໜິຈະເຂົ້າໃກ້ບໍ່ໄດ້ ບໍ່ວ່າເປັນຄົນຕາບອດ ຫລື
ເປັນຄົນງ່ອຍ ຫລືຢູ່ໜ້າມີບາດແຜ ຫລືແຂນຂາຍາວບໍ່ເທົ່າກັນ [19]ຫລືຕີນພິການ ຫລືມືພິການ
[20]ຄົນຫລັງກ່ອມ ຄົນແຄະ ຄົນມີດ່າງໃນຕາ ຄົນເປັນຂີ້ກາກຫລືຂີ້ທິດ ຫລືຊາຍເປັນຕອນ [21]ໃນ
ເຊື້ອສາຍຂອງອາໂຣນຜູ້ເປັນປະໂລຫິດທີ່ມີຕຳໜິ ຢ່າໃຫ້ເຂົ້າມາຖວາຍເຄື່ອງບູຊາດ້ວຍໄຟແດ່
ພຣະຜູ້ເປັນເຈົ້າ ເພາະວ່າພວກເຂົາເປັນຄົນມີຕຳໜິ ຢ່າໃຫ້ເຂົາເຈົ້າເຂົ້າມາຖວາຍອາຫານຕໍ່
ພຣະເຈົ້າຂອງເຂົາເລີຍ [22]ພວກເຂົາຈະກິນອາຫານແຫ່ງພຣະເຈົ້າຂອງພວກເຂົາໄດ້ ທັງຂອງທີ່
ບໍລິສຸດທີ່ສຸດ ແລະຂອງບໍລິສຸດ [23]ແຕ່ຢ່າໃຫ້ພວກເຂົາເຂົ້າມາໃກ້ຜ້າກັ້ງ ຫລືໃກ້ແທ່ນບູຊາ
ເພາະພວກເຂົາມີຕຳໜິ ເພື່ອເຂົາເຈົ້າຈະບໍ່ເຮັດໃຫ້ສະຖານບໍລິສຸດຂອງເຮົາເປັນມົນທິນ ເພາະ
ເຮົາຄືພຣະຜູ້ເປັນເຈົ້າຜູ້ໄດ້ຕັ້ງພວກເຂົາໄວ້ໃຫ້ບໍລິສຸດ”

[24]ໂມເຊຈຶ່ງບອກອາໂຣນ ແລະລູກຫລານຂອງອາໂຣນ ແລະບັນດາຄົນອິສຣາເອນຕາມນັ້ນ

# ບົດທີ 22

## ຂອບເຂດຈຳກັດສຳລັບປະໂລຫິດ ແລະຄອບຄົວ

[1]ພຣະຜູ້ເປັນເຈົ້າກ່າວກັບໂມເຊວ່າ [2]“ຈົ່ງບອກອາໂຣນກັບລູກຫລານຂອງລາວໃຫ້ອອກຫ່າງ

ຈາກສິ່ງບໍລິສຸດຂອງຄົນ ອິສຣາເອນ ເພື່ອວ່າພວກເຂົາທັງຫລາຍຈະບໍ່ໄດ້ເຮັດໃຫ້ນາມອັນບໍລິສຸດ
ຂອງເຮົາເປັນມົນທິນດ້ວຍສິ່ງທີ່ພວກເຂົາທັງຫລາຍຖວາຍແດ່ເຮົາ ເຮົາຄືພຣະຜູ້ເປັນເຈົ້າ [3]ຈົ່ງ
ກ່າວແກ່ເຂົາເຈົ້າທັງຫລາຍວ່າ ‘ຖ້າຄົນໜຶ່ງຄົນໃດໃນເຊື້ອສາຍຂອງເຈົ້າຕະຫລອດຊົ່ວອາຍຸ ເຂົ້າ
ໃກ້ຂອງບໍລິສຸດ ຊຶ່ງຄົນ ອິສຣາເອນ ຖວາຍແດ່ພຣະຜູ້ເປັນເຈົ້າ ໃນຂະນະທີ່ພວກເຂົາມີມົນທິນຢູ່
ຈະຕ້ອງຕັດຄົນນັ້ນອອກໄປໃຫ້ພົ້ນໜ້າເຮົາ ເຮົາຄືພຣະຜູ້ເປັນເຈົ້າ [4]ຢ່າໃຫ້ເຊື້ອສາຍ ອາໂຣນ ຄົນ
ໃດທີ່ເປັນພະຍາດຂີ້ທູດຫລືມີສິ່ງໄຫລອອກມາ ກິນຂອງບໍລິສຸດ ຢ່າໃຫ້ກິນຈົນກວ່າລາວຈະສະ-
ອາດແລ້ວ ຜູ້ໃດແຕະຕ້ອງສິ່ງທີ່ເປັນມົນທິນໂດຍແຕະຕ້ອງສົບ ຫລືຜູ້ທີ່ມີນໍ້າກາມໄຫລອອກ
[5]ຫລືຜູ້ໃດທີ່ແຕະຕ້ອງສັດເລືອຄານ ຊຶ່ງເຮັດໃຫ້ລາວເປັນມົນທິນ ຫລືແຕະຕ້ອງຄົນທີ່ເປັນມົນທິນ
ຊຶ່ງອາດເຮັດໃຫ້ຕົນເປັນມົນທິນນຳ ບໍ່ວ່າຈະເປັນມົນທິນຊະນິດໃດກໍຕາມ [6]ບຸກຄົນຜູ້ແຕະຕ້ອງ
ສິ່ງເຫລົ່ານີ້ ຕ້ອງເປັນມົນທິນໄປຈົນຮອດຕອນແລງ ແລະຈະກິນຂອງບໍລິສຸດບໍ່ໄດ້ ນອກຈາກ
ວ່າລາວຈະອາບນໍ້າຊຳລະຕົວກ່ອນ [7]ເມື່ອຕາເວັນຕົກ ລາວກໍສະອາດ ຫລັງຈາກນັ້ນ ລາວຈຶ່ງ
ກິນຂອງບໍລິສຸດໄດ້ ເພາະສິ່ງເຫລົ່ານັ້ນເປັນອາຫານຂອງເຂົາເຈົ້າ [8]ສິ່ງໃດທີ່ຕາຍເອງ ຫລືຖືກ
ສັດກັດຕາຍ ຢ່າກິນ ເພາະຈະເປັນມົນທິນດ້ວຍສິ່ງເຫລົ່ານີ້ ເຮົາຄືພຣະຜູ້ເປັນເຈົ້າ’ [9]ເພາະສະ-
ນັ້ນ ພວກເຂົາທັງຫລາຍຕ້ອງຮັກສາກົດຂອງເຮົາ ຢ້ານວ່າພວກເຂົາຈະຕ້ອງຮັບໂທດບາບເພາະ
ສິ່ງນັ້ນ ແລະຈະຕ້ອງຕາຍ ເມື່ອພວກເຂົາເຮັດສິ່ງນັ້ນໃຫ້ເປັນມົນທິນ ເຮົາຄືພຣະຜູ້ເປັນເຈົ້າຜູ້ທີ່
ໄດ້ຕັ້ງພວກເຂົາໄວ້ໃຫ້ບໍລິສຸດ

[10]ຢ່າໃຫ້ຄົນພາຍນອກກິນຂອງບໍລິສຸດ ຜູ້ທີ່ມາອາໄສຢູ່ກັບປະໂລຫິດ ຫລືລູກຈ້າງຢ່າໃຫ້ກິນ
ຂອງບໍລິສຸດນັ້ນ [11]ແຕ່ຖ້າປະໂລຫິດຄົນໜຶ່ງຊື້ຂ້າທາດມາດ້ວຍເງິນເປັນຊັບຂອງຕົນ ຂ້າທາດນັ້ນ
ຈະກິນກໍໄດ້ ແລະຜູ້ທີ່ເກີດໃນຄົວເຮືອນຂອງປະໂລຫິດກິນອາຫານນັ້ນໄດ້ [12]ຖ້າລູກສາວຂອງ
ປະໂລຫິດໄປແຕ່ງງານກັບຄົນນອກ ນາງກໍກິນຂອງຖວາຍທີ່ບໍລິສຸດນັ້ນບໍ່ໄດ້ [13]ຖ້າລູກສາວຂອງ
ປະໂລຫິດເປັນແມ່ໝ້າຍ ຫລືແມ່ຮ້າງແລະບໍ່ມີລູກ ແລະກັບມາຢູ່ທີ່ເຮືອນຂອງພໍ່ຄືຕອນທີ່ນາງຍັງ
ເປັນສາວ ນາງກໍກິນອາຫານຂອງພໍ່ໄດ້ ແຕ່ຄົນນອກກິນບໍ່ໄດ້

[14]ຖ້າຄົນໃດກິນຂອງບໍລິສຸດໂດຍບໍ່ໄດ້ເຈດຕະນາ ລາວຈະຕ້ອງຈ່າຍເງິນເພີ່ມຄ່າຂອງນັ້ນໜຶ່ງ
ໃນຫ້າ ແລະມອບແກ່ປະໂລຫິດພ້ອມກັບຂອງບໍລິສຸດນັ້ນ [15]ຢ່າໃຫ້ປະໂລຫິດເຮັດໃຫ້ຂອງບໍລິສຸດ
ຂອງຄົນ ອິສຣາເອນ ທີ່ເອົາມາຖວາຍແດ່ພຣະຜູ້ເປັນເຈົ້າເປັນມົນທິນ [16]ຊຶ່ງຈະເຮັດໃຫ້ລາວໄດ້
ຮັບໂທດຕາມຄວາມຊົ່ວຊ້າຍ້ອນການລະເມີດກິນຂອງບໍລິສຸດ ເພາະເຮົາຄືພຣະຜູ້ເປັນເຈົ້າຜູ້ໄດ້
ຕັ້ງລາວໄວ້ໃຫ້ບໍລິສຸດ”

## ເຄື່ອງບູຊາຕ້ອງປາສະຈາກຕຳໜິ

[17]ພຣະຜູ້ເປັນເຈົ້າກ່າວກັບ ໂມເຊ ວ່າ [18]“ຈົ່ງກ່າວແກ່ ອາໂຣນ ແລະລູກຫລານຂອງ ອາໂຣນ
ແລະແກ່ຄົນ ອິສຣາເອນ ທັງໝົດວ່າເມື່ອຄົນໃນເຊື້ອສາຍ ອິສຣາເອນ ຫລືຄົນຕ່າງດ້າວໃນ ອິສຣາ-
ເອນ ຜູ້ໃດຖວາຍເຄື່ອງບູຊາບໍ່ວ່າຈະເປັນເຄື່ອງປະຕິຍານ ແລະບັນດາເຄື່ອງບູຊາດ້ວຍໃຈສະໝັກ
ຂອງຕົນ ຊຶ່ງຖວາຍບູຊາແດ່ພຣະຜູ້ເປັນເຈົ້າເປັນເຄື່ອງເຜົາບູຊາ [19]ເຈົ້າຈົ່ງຖວາຍດ້ວຍຄວາມ
ເຕັມໃຈ ຄືສັດໂຕຜູ້ທີ່ປາດສະຈາກຕຳໜິ ຄືງົວ ຫລືແກະ ຫລືແບ້ [20]ເຈົ້າຢ່າຖວາຍສິ່ງໃດໆທີ່ມີ

ຕຳໜິ ເພາະຈະບໍ່ເປັນທີ່ພໍພຣະໄທ 21ເມື່ອຄົນໃດນຳເຄື່ອງຖວາຍ ເພື່ອຄວາມສາມັກຄີທຳມາ
ຖວາຍແດ່ພຣະຜູ້ເປັນເຈົ້າ ເພື່ອເຮັດຕາມຄຳປະຕິຍານ ຫລືຖວາຍດ້ວຍໃຈສະໝັກ ເປັນສັດທີ່
ໄດ້ມາຈາກຝູງງົວ ຫລືຝູງແບ້ແກະ ສັດນັ້ນຕ້ອງບໍ່ມີຕຳໜິ ຈຶ່ງຈະເປັນທີ່ພໍພຣະໄທ ຢ່າໃຫ້ສັດນັ້ນ
ມີຕຳໜິເລີຍ
22ສັດທີ່ຕາບອດ ຫລືພິການ ຫລືມີບາດ ຫລືມີສິ່ງໄຫລອອກ ຫລືເປັນຂີ້ກາກ ຫລືເປັນຂີ້ທືດ
ເຈົ້າຢ່າເອົາມາຖວາຍແດ່ພຣະຜູ້ເປັນເຈົ້າ ຫລືເອົາມາເປັນເຄື່ອງບູຊາດ້ວຍໄຟຢູ່ເທິງແທ່ນບູຊາ
ຖວາຍແດ່ພຣະຜູ້ເປັນເຈົ້າ 23ງົວ ຫລືລູກແກະທີ່ມີຂາຍາວເກີນໄປ ຫລືສັ້ນເກີນໄປທ່ານຈະເອົາ
ມາຖວາຍເປັນເຄື່ອງບູຊາດ້ວຍໃຈສະໝັກກໍໄດ້ ແຕ່ຖ້າເປັນເຄື່ອງບູຊາປະຕິຍານກໍບໍ່ເປັນທີ່ພໍ-
ພຣະໄທ 24ສັດໂຕໃດທີ່ຊໍ້າ ຫລືຖືກຕີ ຫລືມີບາດ ຫລືຖືກຕອນ ເຈົ້າຢ່າເອົາມາຖວາຍແດ່ພຣະ-
ຜູ້ເປັນເຈົ້າໃຫ້ເປັນເຄື່ອງບູຊາໃນແຜ່ນດິນຂອງເຈົ້າ 25ເຈົ້າຢ່າເອົາສັດຊຶ່ງໄດ້ມາຈາກຄົນຕ່າງ
ດ້າວຖວາຍເປັນອາຫານແດ່ພຣະເຈົ້າຂອງເຈົ້າ ເພາະສັດນັ້ນມີຕຳໜິດ້ວຍຖືກເຮັດໃຫ້ພິການ ຈຶ່ງ
ບໍ່ເປັນທີ່ພໍພຣະໄທ”
26ພຣະຜູ້ເປັນເຈົ້າກ່າວກັບໂມເຊວ່າ 27“ເມື່ອງົວ ຫລືແກະ ຫລືແບ້ເກີດມາ ໃຫ້ຢູ່ກັບແມ່ເຈັດ
ມື້ ຕັ້ງແຕ່ມື້ທີແປດເປັນຕົ້ນໄປຈະໃຊ້ເປັນເຄື່ອງບູຊາດ້ວຍໄຟຖວາຍແດ່ພຣະຜູ້ເປັນເຈົ້າກໍເປັນທີ່
ພໍພຣະໄທ 28ເຖິງວ່າແມ່ສັດນັ້ນຈະເປັນງົວ ຫລືແກະກໍດີ ເຈົ້າຢ່າຂ້າມັນພ້ອມກັບລູກຂອງມັນໃນ
ມື້ດຽວກັນ 29ເມື່ອເຈົ້າຖວາຍສັດບູຊາເປັນເຄື່ອງບູຊາໂມທະນາພຣະຄຸນແດ່ພຣະຜູ້ເປັນເຈົ້າ ເຈົ້າ
ຈົ່ງຖວາຍເຄື່ອງສັດບູຊານັ້ນດ້ວຍຄວາມເຕັມໃຈ 30ຈົ່ງກິນເຄື່ອງບູຊານັ້ນໃນມື້ຖວາຍເຄື່ອງບູຊາ
ຢ່າໃຫ້ສິ່ງໜຶ່ງສິ່ງໃດເຫລືອໄວ້ຈົນຮອດຮຸ່ງເຊົ້າເລີຍ ເຮົາຄືພຣະຜູ້ເປັນເຈົ້າ
31ເພາະສະນັ້ນ ເຈົ້າຈົ່ງຮັກສາບັນຍັດຂອງເຮົາ ແລະເຮັດຕາມ ເຮົາຄືພຣະຜູ້ເປັນເຈົ້າ 32ເຈົ້າ
ຢ່າເຮັດໃຫ້ນາມບໍລິສຸດຂອງເຮົາເປັນທີ່ໝິ່ນປະໝາດ ແຕ່ໃຫ້ເຮົາເປັນຜູ້ບໍລິສຸດໃນໝູ່ຄົນອິສຣາ-
ເອນ ເຮົາຄືພຣະຜູ້ເປັນເຈົ້າຜູ້ໄດ້ຕັ້ງເຈົ້າໄວ້ໃຫ້ບໍລິສຸດ 33ຜູ້ເອົາເຈົ້າອອກຈາກແຜ່ນດິນເອຢິບ ກໍ
ເພື່ອເປັນພຣະເຈົ້າຂອງພວກເຈົ້າ ເຮົາຄືພຣະຜູ້ເປັນເຈົ້າ”

# ບົດທີ 23

## ວັນສະບາໂຕ

1ພຣະຜູ້ເປັນເຈົ້າກ່າວກັບໂມເຊວ່າ 2“ຈົ່ງກ່າວແກ່ຄົນອິສຣາເອນວ່າ ເທດສະການກິນລ້ຽງ
ຕາມກຳນົດແກ່ພຣະຜູ້ເປັນເຈົ້າຊຶ່ງເຈົ້າຈະຕ້ອງປະກາດວ່າເປັນການປະຊຸມບໍລິສຸດ ຄືເທດສະ-
ການກິນລ້ຽງຕາມກຳນົດຂອງເຮົານັ້ນມີດັ່ງນີ້
3ຈົ່ງເຮັດວຽກໃນຫົກມື້ ແຕ່ມື້ທີເຈັດນັ້ນເປັນວັນສະບາໂຕແຫ່ງການຢຸດພັກ ເປັນມື້ປະຊຸມບໍລິ-
ສຸດ ເຈົ້າຢ່າເຮັດວຽກໃດໆ ເປັນວັນສະບາໂຕແດ່ພຣະຜູ້ເປັນເຈົ້າຂອງເຈົ້າ

## ເທດສະການປັດສະຄາ ແລະເທດສະການກິນເຂົ້າຈີ່ບໍ່ມີເຊື້ອແປ້ງ

4ຕໍ່ໄປນີ້ເປັນເທດສະການກິນລ້ຽງຕາມກຳນົດແດ່ພຣະຜູ້ເປັນເຈົ້າ ເປັນການປະຊຸມບໍລິສຸດ
ຊຶ່ງເຈົ້າຈະຕ້ອງປະກາດຕາມເວລາກຳນົດໃຫ້ພວກເຂົາຮູ້ 5ໃນຕອນແລງວັນທີສິບສີ່ເດືອນທີໜຶ່ງ

ເປັນວັນເທດສະການປັດສະຄາຂອງພຣະຜູ້ເປັນເຈົ້າ 6ແລະໃນວັນທີສິບຫ້າເດືອນດຽວກັນ ເປັນ
ເທດສະການກິນເຂົ້າຈີ່ບໍ່ມີເຊື້ອແປ້ງຖວາຍແດ່ພຣະຜູ້ເປັນເຈົ້າ ໃຫ້ເຈົ້າກິນເຂົ້າຈີ່ບໍ່ມີເຊື້ອແປ້ງ
ເຈັດມື້ 7ໃນວັນຕົ້ນສັບປະດາ ເຈົ້າຈົ່ງມີການປະຊຸມບໍລິສຸດ ເຈົ້າຢ່າເຮັດວຽກໜັກ 8ແຕ່ເຈົ້າຈົ່ງ
ຖວາຍເຄື່ອງບູຊາດ້ວຍໄຟແດ່ພຣະຜູ້ເປັນເຈົ້າໃຫ້ຄົບເຈັດມື້ ໃນມື້ທີເຈັດເປັນວັນປະຊຸມບໍລິສຸດ
ເຈົ້າຢ່າເຮັດວຽກໜັກ"

## ຜົນລຸ້ນທຳອິດ

9ພຣະຜູ້ເປັນເຈົ້າກ່າວກັບໂມເຊວ່າ 10"ຈົ່ງກ່າວແກ່ຄົນອິສຣາເອນວ່າ ເມື່ອເຈົ້າມາເຖິງແຜ່ນ-
ດິນຊຶ່ງເຮົາປະທານໃຫ້ເຈົ້າ ແລະເມື່ອໄດ້ກ່ຽວພືດຜົນຂອງແຜ່ນດິນນັ້ນ ເຈົ້າຈົ່ງເອົາຮວງເຂົ້າທີ່
ກ່ຽວໃນລຸ້ນທຳອິດໄປໃຫ້ປະໂລຫິດ 11ແລະປະໂລຫິດຈະເອົາຮວງເຂົ້ານັ້ນມາຖວາຍຕໍ່ພຣະພັກ
ພຣະຜູ້ເປັນເຈົ້າ ເພື່ອເຈົ້າຈະເປັນທີ່ພໍພຣະໄທ ຫລັງຈາກວັນສະບາໂຕແລ້ວປະໂລຫິດຈະມອບ
ຖວາຍ 12ໃນມື້ທີ່ເຈົ້າຖວາຍຮວງເຂົ້າ ເຈົ້າຈົ່ງຖວາຍລູກແກະຜູ້ອາຍຸໜຶ່ງປີບໍ່ມີຕຳໜິເປັນເຄື່ອງ
ເຜົາບູຊາຖວາຍແດ່ພຣະຜູ້ເປັນເຈົ້າ 13ແລະເຄື່ອງບູຊາທີ່ຄູ່ກັນນັ້ນ ຄືຍອດແປ້ງສອງໃນສິບເອ-
ຟານວດດ້ວຍນ້ຳມັນເຜົາດ້ວຍໄຟຖວາຍແດ່ພຣະຜູ້ເປັນເຈົ້າເປັນກິ່ນຫອມທີ່ພໍພຣະໄທ ແລະ
ເຄື່ອງດື່ມບູຊາທີ່ຄູ່ກັນຄືນ້ຳອະງຸ່ນໜຶ່ງໃນສີ່ລິດ 14ເຈົ້າຢ່າກິນເຂົ້າຈີ່ ຫລືເຂົ້າຂົ້ວ ຢ່າກິນເມັດເຂົ້າ
ໃນຮວງຈົນກວ່າຈະຮອດມື້ນັ້ນ ຄືເຈົ້າຈະເອົາເຄື່ອງບູຊາຖວາຍແດ່ພຣະເຈົ້າຂອງເຈົ້າ ທັງນີ້ເປັນ
ກົດເກນຖາວອນຕະຫລອດຊົ່ວອາຍຸຂອງເຈົ້າ

## ເທດສະການເກັບກ່ຽວ

15ເຈົ້າທັງຫລາຍຈົ່ງນັບແຕ່ມື້ຮຸ່ງຂຶ້ນ ຫລັງຈາກວັນສະບາໂຕ ຈາກມື້ທີ່ເຈົ້າທັງຫລາຍໄດ້ເອົາ
ຮວງເຂົ້າມາຖວາຍຄົບເຈັດວັນສະບາໂຕ 16ນັບໄປໃຫ້ໄດ້ຫ້າສິບມື້ ຈົນຮອດວັນສະບາໂຕທີເຈັດ
ແລ້ວ ເຈົ້າຈົ່ງນຳພືດຜົນເປັນເມັດທີ່ເກັບກ່ຽວໄດ້ໃໝ່ມາຖວາຍແດ່ພຣະຜູ້ເປັນເຈົ້າ 17ຈົ່ງເອົາ
ເຂົ້າຈີ່ສອງກ້ອນເຮັດດ້ວຍແປ້ງສອງໃນສິບເອຟາຈາກບ່ອນອາໄສຂອງເຈົ້າມາມອບຖວາຍໃຫ້
ເຮັດດ້ວຍຍອດແປ້ງໃສ່ເຊື້ອແປ້ງ ເປັນຜົນລຸ້ນທຳອິດຖວາຍແດ່ພຣະຜູ້ເປັນເຈົ້າ 18ພ້ອມກັບເຂົ້າ
ຈີ່ນັ້ນ ເຈົ້າຈົ່ງເອົາລູກແກະເຈັດໂຕອາຍຸໜຶ່ງປີປາດສະຈາກຕຳໜິ ງົວໜຸ່ມໂຕໜຶ່ງ ແກະຜູ້ສອງໂຕ
ມາເປັນເຄື່ອງເຜົາບູຊາຖວາຍແດ່ພຣະຜູ້ເປັນເຈົ້າ ພ້ອມກັບພືດຜົນເປັນເມັດ ແລະເຄື່ອງດື່ມບູ-
ຊາອັນເປັນຄູ່ກັນໃຫ້ເປັນເຄື່ອງບູຊາດ້ວຍໄຟ ເປັນກິ່ນຫອມທີ່ພໍພຣະໄທຖວາຍແດ່ພຣະຜູ້ເປັນ-
ເຈົ້າ 19ເຈົ້າຈົ່ງຖວາຍລູກແບ້ໂຕໜຶ່ງເປັນເຄື່ອງບູຊາໄຖ່ບາບ ແລະລູກແກະອາຍຸໜຶ່ງປີສອງໂຕ
ເປັນເຄື່ອງບູຊາເພື່ອຄວາມສາມັກຄີທຳ 20ໃຫ້ປະໂລຫິດນຳມາຖວາຍພ້ອມກັບເຂົ້າຈີ່ ຊຶ່ງເປັນຜົນ
ລຸ້ນທຳອິດເປັນເຄື່ອງຖວາຍຕໍ່ພຣະພັກພຣະຜູ້ເປັນເຈົ້າ ພ້ອມກັບລູກແກະສອງໂຕ ຈະເປັນຂອງ
ບໍລິສຸດແດ່ພຣະຜູ້ເປັນເຈົ້າສຳລັບປະໂລຫິດ

21ແລະໃນມື້ດຽວກັນນັ້ນ ເຈົ້າຈົ່ງປະກາດວ່າຈົ່ງມີການປະຊຸມບໍລິສຸດແກ່ເຈົ້າ ເຈົ້າຢ່າເຮັດວຽກ
ໜັກ ໂດຍໃຫ້ເປັນກົດເກນຖາວອນສຳລັບພວກເຈົ້າຕະຫລອດຊົ່ວອາຍຸຂອງເຈົ້າ 22ແລະເມື່ອເຈົ້າ
ກ່ຽວເຂົ້າໃນແຜ່ນດິນຂອງເຈົ້າ ເຈົ້າຢ່າກ່ຽວໄປບ່ອນຂອບນາໃຫ້ໝົດ ແລະຢ່າເກັບເຂົ້າທີ່ກ່ຽວຕົກ
ເຈົ້າຈົ່ງຖິ້ມໄວ້ໃຫ້ຄົນຍາກຈົນ ແລະຄົນຕ່າງດ້າວ ເຮົາຄືພຣະຜູ້ເປັນເຈົ້າພຣະເຈົ້າຂອງເຈົ້າ"

## ເທດສະການສຽງແກ

[23]ພຣະຜູ້ເປັນເຈົ້າ ກ່າວກັບ ໂມເຊ ວ່າ [24]"ຈົ່ງກ່າວ ແກ່ຄົນ ອິສຣາເອນ ວ່າ ໃນວັນທີໜຶ່ງຂອງ
ເດືອນທີເຈັດ ເຈົ້າທັງຫລາຍຈົ່ງຖືເປັນວັນສະບາໂຕເປັນວັນປະຊຸມບໍລິສຸດ ປະກາດເປັນທີ່ລະນຶກ
ດ້ວຍສຽງແກ [25]ເຈົ້າຢ່າເຮັດວຽກໜັກ ແລະເຈົ້າຈົ່ງເອົາເຄື່ອງບູຊາດ້ວຍໄຟມາຖວາຍແດ່ພຣະຜູ້-
ເປັນເຈົ້າ"

## ວັນມື້ລຶບລ້າງບາບ

[26]ພຣະຜູ້ເປັນເຈົ້າ ກ່າວກັບ ໂມເຊ ວ່າ [27]"ໃນວັນທີສິບຂອງເດືອນທີເຈັດນີ້ເປັນມື້ໄຖ່ບາບ ຈະ
ເປັນວັນປະຊຸມບໍລິສຸດແກ່ເຈົ້າ ແລະເຈົ້າຕ້ອງຖ່ອມໃຈລົງ ແລະເອົາເຄື່ອງບູຊາດ້ວຍໄຟມາຖວາຍ
ແດ່ພຣະຜູ້ເປັນເຈົ້າ [28]ໃນມື້ດຽວກັນນັ້ນເຈົ້າຢ່າເຮັດວຽກໃດໆ ເພາະເປັນມື້ໄຖ່ບາບ ທີ່ຈະເຮັດ
ການໄຖ່ບາບຂອງເຈົ້າຕໍ່ພຣະພັກພຣະຜູ້ເປັນເຈົ້າພຣະເຈົ້າຂອງເຈົ້າ [29]ໃນມື້ດຽວກັນນີ້ ຖ້າຜູ້ໃດ
ບໍ່ຖ່ອມໃຈລົງ ກໍໃຫ້ຕັດຜູ້ນັ້ນອອກຈາກທ່າມກາງຊົນຊາດຂອງຕົນ [30]ແລະໃນມື້ດຽວກັນນີ້ ຖ້າຜູ້
ໃດເຮັດວຽກໃດໆ ເຮົາຈະທຳລາຍຜູ້ນັ້ນຈາກທ່າມກາງຊົນຊາດຂອງຕົນ [31]ເຈົ້າຢ່າເຮັດວຽກໃດ
ເລີຍ ໂດຍໃຫ້ເປັນກົດເກນຖາວອນຕະຫລອດຊົ່ວອາຍຸຂອງເຈົ້າ [32]ແຕ່ໃຫ້ເປັນວັນສະບາໂຕສຳ-
ລັບຢຸດພັກແກ່ເຈົ້າ ແລະເຈົ້າຈົ່ງຖ່ອມໃຈລົງ ເລີ້ມແຕ່ຕອນແລງໃນວັນທີເກົ້າຂອງເດືອນ ເຈົ້າ
ຕ້ອງຮັກສາວັນສະບາໂຕຈາກຕອນແລງມື້ນີ້ເຖິງຕອນແລງມື້ອື່ນ"

## ເທດສະການປຸກຕູບຢູ່

[33]ພຣະຜູ້ເປັນເຈົ້າ ກ່າວກັບ ໂມເຊ ວ່າ [34]"ຈົ່ງກ່າວ ແກ່ຄົນ ອິສຣາເອນ ວ່າ ໃນວັນທີສິບຫ້າ
ເດືອນທີເຈັດນີ້ ເປັນວັນເທດສະການປຸກຕູບຢູ່ຖວາຍແດ່ພຣະຜູ້ເປັນເຈົ້າໝົດເຈັດມື້ [35]ຈະມີການ
ປະຊຸມບໍລິສຸດໃນມື້ທຳອິດ ເຈົ້າຢ່າເຮັດວຽກໜັກ [36]ໃນເຈັດມື້ເຈົ້າຈົ່ງຖວາຍເຄື່ອງບູຊາດ້ວຍໄຟ
ແດ່ພຣະຜູ້ເປັນເຈົ້າ ແລະໃນມື້ທີແປດຈະເປັນມື້ປະຊຸມອັນບໍລິສຸດແກ່ເຈົ້າ ແລະເຈົ້າຈົ່ງຖວາຍ
ເຄື່ອງບູຊາດ້ວຍໄຟແດ່ພຣະຜູ້ເປັນເຈົ້າ ເປັນການປະຊຸມອັນສັກສິດ ແລະເຈົ້າທັງຫລາຍຢ່າເຮັດ
ວຽກໜັກ

[37]ນີ້ແຫລະ ເປັນເທດສະການກິນລ້ຽງຂອງພຣະຜູ້ເປັນເຈົ້າ ຊຶ່ງເຈົ້າຕ້ອງປະກາດໃຫ້ເປັນມື້
ປະຊຸມອັນບໍລິສຸດເພື່ອຖວາຍແດ່ພຣະຜູ້ເປັນເຈົ້າ ຊຶ່ງເຄື່ອງບູຊາດ້ວຍໄຟ ເຄື່ອງເຜົາບູຊາ ແລະ
ພືດຜົນເປັນເມັດ ທັງເຄື່ອງສັດບູຊາ ແລະເຄື່ອງດື່ມບູຊາຕາມມື້ກຳນົດນັ້ນໆ [38]ເທດສະການ
ເຫລົ່ານີ້ຖືກຈັດເຂົ້າກັບມື້ຕາມປົກກະຕິ ຄືວັນສະບາໂຕແຫ່ງພຣະຜູ້ເປັນເຈົ້າ ແລະເຄື່ອງຖວາຍ
ຂອງເຈົ້າ ເຄື່ອງປະຕິຍານທັງຫລາຍຂອງເຈົ້າ ແລະເຄື່ອງບູຊາດ້ວຍໃຈສະໝັກທັງຫລາຍຂອງ
ເຈົ້າ ຊຶ່ງເຈົ້າເຄີຍເອົາມາຖວາຍແດ່ພຣະຜູ້ເປັນເຈົ້າ

[39]ແລ້ວໃນວັນທີສິບຫ້າຂອງເດືອນທີເຈັດ ເມື່ອເຈົ້າໄດ້ເກັບພືດຜົນທີ່ໄດ້ຈາກແຜ່ນດິນນັ້ນເຂົ້າ
ມາແລ້ວ ເຈົ້າຈົ່ງມີເທດສະການກິນລ້ຽງແຫ່ງພຣະຜູ້ເປັນເຈົ້າເຈັດມື້ ໃນມື້ທຳອິດຈະເປັນວັນສະ-
ບາໂຕ ແລະໃນມື້ທີແປດຈະເປັນວັນສະບາໂຕ [40]ໃນມື້ທຳອິດ ເຈົ້າຈົ່ງເອົາໝາກໄມ້ຈາກຕົ້ນໄມ້
ອັນງາມ ໃບຕານ ກິ່ງໄມ້ທີ່ມີໃບຫລາຍ ງ່າຕົ້ນພ້າວ ແລະເຈົ້າຈົ່ງຊົມຊື່ນຍິນດີຕໍ່ພຣະພັກພຣະຜູ້-
ເປັນເຈົ້າພຣະເຈົ້າຂອງເຈົ້າ ລະຫວ່າງເຈັດມື້ [41]ເຈົ້າຈົ່ງຖືເປັນເທດສະການກິນລ້ຽງປີລະເຈັດມື້

ຖວາຍແດ່ພຣະຜູ້ເປັນເຈົ້າ  ໂດຍໃຫ້ເປັນກົດເກນຖາວອນຕະຫລອດຊົ່ວອາຍຸຂອງເຈົ້າ  ເຈົ້າຈົ່ງຖື
ເທດສະການກິນລ້ຽງນີ້ໃນເດືອນທີເຈັດ  42ເຈົ້າຈົ່ງຢູ່ໃນຕູບເຈັດມື້  ທຸກຄົນທີ່ເກີດໃນເຊື້ອສາຍ
ພວກ ອິສຣາເອນ ໃຫ້ເຂົ້າຢູ່ໃນຕູບ  43ເພື່ອຕະຫລອດຊົ່ວອາຍຸຂອງເຈົ້າຈະໄດ້ຮູ້ວ່າ  ເມື່ອເຮົາພາ
ຄົນ ອິສຣາເອນ ອອກຈາກແຜ່ນດິນ ເອຢິບ ນັ້ນເຮົາໄດ້ໃຫ້ພວກເຂົາຢູ່ໃນຕູບ  ເຮົາຄື ພຣະຜູ້ເປັນ-
ເຈົ້າ ພຣະເຈົ້າ ຂອງເຈົ້າ"

44ດັ່ງນີ້ແຫລະ ໂມເຊ ຈຶ່ງໄດ້ປະກາດໃຫ້ຄົນ ອິສຣາເອນ ຮູ້ເຖິງເທດສະການກິນລ້ຽງຕາມກຳນົດ
ຂອງ ພຣະຜູ້ເປັນເຈົ້າ

# ບົດທີ 24

## ໃຫ້ເອົານ້ຳມັນບໍລິສຸດເພື່ອໃຕ້ຕະກຽງ

1ພຣະຜູ້ເປັນເຈົ້າ ກ່າວກັບ ໂມເຊ ວ່າ  2"ເຈົ້າຈົ່ງສັ່ງ ແກ່ຄົນ ອິສຣາເອນ ໃຫ້ເອົານ້ຳມັນບໍລິສຸດ
ສະກັດຈາກໝາກກອກເທດ ເພື່ອໃສ່ຕະກຽງ  ເພື່ອໃຫ້ຕະກຽງຮຸ່ງຢູ່ສະເໝີ  3ພາຍໃນຫໍເຕັນແຫ່ງ
ຊຸມນຸມຂ້າງນອກຜ້າກັ້ງຫີບພຣະສັນຍານັ້ນ  ໃຫ້ ອາໂຣນ ຈັດຕະກຽງໃຫ້ເປັນລະບຽບ  ຕັ້ງແຕ່ຕອນ
ແລງ ຈົນຮອດຕອນ ເຊົ້າສະເໝີຕໍ່ພຣະພັກ ພຣະຜູ້ເປັນເຈົ້າ  ໂດຍໃຫ້ເປັນກົດເກນຖາວອນຕະ-
ຫລອດຊົ່ວອາຍຸຂອງເຈົ້າ  4ໃຫ້ ອາໂຣນ ຈັດຕະກຽງໃຫ້ເປັນລະບຽບຢູ່ເທິງຕະກຽງບໍລິສຸດຢູ່ສະເໝີ
ຕໍ່ພຣະພັກ ພຣະຜູ້ເປັນເຈົ້າ

## ເຂົ້າຈີ່ຕໍ່ໜ້າພຣະພັກສິບສອງກ້ອນ

5ແລະເຈົ້າຈົ່ງເອົາຍອດແປ້ງ  ປີ້ງເຂົ້າຈີ່ສິບສອງກ້ອນ  ແຕ່ລະກ້ອນໃຊ້ແປ້ງສອງໃນສິບເອຟາ
6ເຈົ້າຈົ່ງຈັດເຂົ້າຈີ່ນັ້ນວາງເທິງໂຕະບໍລິສຸດຕໍ່ພຣະພັກ ພຣະຜູ້ເປັນເຈົ້າ  ເປັນສອງແຖວໆລະຫົກ
ກ້ອນ  7ແລະເຈົ້າຈົ່ງເອົາເຄື່ອງກຳຍານບໍລິສຸດໃສ່ໄວ້ແຕ່ລະແຖວ  ເພື່ອຈະຄູ່ກັບເຂົ້າຈີ່  ເປັນສ່ວນ
ທີ່ລະນຶກ  ເປັນເຄື່ອງບູຊາດ້ວຍໄຟຖວາຍແດ່ພຣະຜູ້ເປັນເຈົ້າ  8ທຸກໆວັນສະບາໂຕ  ໃຫ້ອາໂຣນ
ຈັດໄວ້ໃຫ້ເປັນລະບຽບຖວາຍຕໍ່ພຣະພັກ ພຣະຜູ້ເປັນເຈົ້າ ສະເໝີ  ໃນນາມຂອງຄົນ ອິສຣາເອນ ໃຫ້
ເປັນຄຳໝັ້ນສັນຍາຕະຫລອດໄປເປັນນິດ  9ເຂົ້າຈີ່ນີ້ຕົກເປັນຂອງ ອາໂຣນ ແລະລູກຊາຍຂອງລາວ
ໃຫ້ລາວກິນໄດ້ໃນບ່ອນບໍລິສຸດ  ເພາະເປັນສ່ວນບໍລິສຸດທີ່ສຸດທີ່ໄດ້ຈາກເຄື່ອງບູຊາເຮັດດ້ວຍໄຟ
ຖວາຍແດ່ພຣະຜູ້ເປັນເຈົ້າ  ແລະໃຫ້ເປັນກົດເກນຖາວອນ"

## ໂທດສຳລັບການໝິ່ນປະມາດ ແລະອາດຊະຍາກອນຄົນອື່ນໆ

10ຕອນນັ້ນ  ມີຊາຍຄົນໜຶ່ງເປັນລູກຊາຍຂອງຍິງຄົນ ອິສຣາເອນ  ຊຶ່ງພໍ່ເປັນຊາວ ເອຢິບ  ອອກ
ໄປທ່າມກາງ  ຄົນ ອິສຣາເອນ ແລະລູກຊາຍຂອງຍິງ ອິສຣາເອນ ໄດ້ຖຽງກັນກັບຊາຍ ອິສຣາເອນ
ຄົນໜຶ່ງໃນຄ້າຍ  11ແລະລູກຊາຍຍິງ ອິສຣາເອນ ຄົນນັ້ນໄດ້ໝິ່ນປະໝາດພຣະນາມຂອງ ພຣະຜູ້-
ເປັນເຈົ້າ  ແລະໄດ້ສາບແຊ່ງປ້ອຍດ່າ  ພວກເຂົາຈຶ່ງເອົາຕົວມາໃຫ້ ໂມເຊ  ແມ່ຂອງລາວຊື່ ເຊໂລ-
ມິດ ລູກສາວຂອງ ດິບຣີ ຄົນຕະກູນ ດານ  12ເພິ່ນຈຶ່ງຈອງຈຳຊາຍຄົນນັ້ນໄວ້ຈົນກວ່ານ້ຳພຣະໄທ
ຂອງ ພຣະຜູ້ເປັນເຈົ້າ ຈະເປັນທີ່ກະຈ່າງແຈ້ງຕໍ່ພວກເຂົາທັງຫລາຍ

13ພຣະຜູ້ເປັນເຈົ້າ ກ່າວກັບ ໂມເຊ ວ່າ  14"ຈົ່ງເອົາຜູ້ທີ່ສາບແຊ່ງປ້ອຍດ່ານັ້ນອອກມາຈາກຄ້າຍ

ໃຫ້ບັນດາຜູ້ທີ່ໄດ້ຍິນຄຳສາບແຊ່ງປ້ອຍດ່າເອົາມືຂອງຕົນວາງໄວ້ເທິງຫົວຂອງລາວ ແລະໃຫ້ບັນ-
ດາຊຸມນຸມຊົນເອົາຫີນຂວ້າງລາວໃຫ້ຕາຍ [15]ແລະຈົ່ງກ່າວແກ່ຄົນອິສຣາເອນວ່າ ຜູ້ໃດດ່າພຣະ-
ເຈົ້າຂອງຕົນ ຜູ້ນັ້ນຈະຕ້ອງໄດ້ຮັບໂທດບາບ [16]ຜູ້ໃດທີ່ໝິ່ນປະໝາດພຣະນາມຂອງພຣະຜູ້ເປັນ-
ເຈົ້າຈະຕ້ອງຖືກໂທດເຖິງຕາຍ ແລະໃຫ້ຊຸມນຸມຊົນທັງໝົດເອົາຫີນຂວ້າງລາວ ຄົນຕ່າງດ້າວ
ຫລືຊາວເມືອງກໍດີ ເມື່ອລາວໝິ່ນປະໝາດພຣະນາມຂອງພຣະຜູ້ເປັນເຈົ້າ ຈະຕ້ອງຖືກໂທດເຖິງ
ຕາຍ

[17]ຜູ້ທີ່ຂ້າຄົນຕາຍ ຈະຕ້ອງຖືກໂທດເຖິງຕາຍ [18]ຜູ້ໃດທີ່ຂ້າສັດຕ້ອງໃຊ້ ສັດແທນສັດ [19]ຖ້າຜູ້
ໃດເຮັດໃຫ້ເພື່ອນບ້ານບາດເຈັບ ລາວເຮັດໃຫ້ບາດເຈັບຢ່າງໃດ ກໍເຮັດໃຫ້ແກ່ລາວຄືກັນ [20]ຫັກ
ກະດູກແທນກະດູກຫັກ ຕາແທນຕາ ແຂ້ວແທນແຂ້ວ ລາວເຮັດໃຫ້ບາດເຈັບຢ່າງໃດ ລາວກໍຈະ
ຕ້ອງຖືກເຮັດໃຫ້ບາດເຈັບຢ່າງນັ້ນ [21]ຜູ້ໃດທີ່ຂ້າສັດຕ້ອງເສຍຄ່າຊົດໃຊ້ ແລະຜູ້ໃດທີ່ຂ້າຄົນໃຫ້ຜູ້
ນັ້ນຖືກໂທດເຖິງຕາຍ [22]ເຈົ້າຈົ່ງມີກົດໝາຍຢ່າງດຽວກັນສຳລັບຄົນຕ່າງດ້າວ ແລະສຳລັບຊາວ
ເມືອງ ເພາະເຮົາຄືພຣະຜູ້ເປັນເຈົ້າພຣະເຈົ້າຂອງເຈົ້າ”

[23]ໂມເຊກໍບອກແກ່ຄົນອິສຣາເອນໃຫ້ພວກເຂົາພາຄົນທີ່ປ້ອຍດ່າສາບແຊ່ງນັ້ນອອກມາຈາກ
ຄ້າຍ ແລະເອົາຫີນຂວ້າງຜູ້ນັ້ນຕາຍ ຄົນອິສຣາເອນເຮັດດັ່ງນີ້ຕາມທີ່ພຣະຜູ້ເປັນເຈົ້າໄດ້ສັ່ງໂມ-
ເຊໄວ້

# ບົດທີ 25

## ປີສະບາໂຕ ປີແຫ່ງການຢຸດພັກຜ່ອນ

[1]ພຣະຜູ້ເປັນເຈົ້າກ່າວກັບໂມເຊທີ່ພູເຂົາຊີນາຍວ່າ [2]“ຈົ່ງກ່າວແກ່ຄົນອິສຣາເອນວ່າ ເມື່ອ
ເຈົ້າທັງຫລາຍເຂົ້າໄປໃນແຜ່ນດິນທີ່ເຮົາໃຫ້ເຈົ້ານັ້ນ ຈົ່ງໃຫ້ແຜ່ນດິນນັ້ນຖືວັນສະບາໂຕແດ່ພຣະ-
ຜູ້ເປັນເຈົ້າ [3]ເຈົ້າຈົ່ງຫວ່ານພືດໃນນາຂອງເຈົ້າໃນລະຫວ່າງຫົກປີ ແລະຈົ່ງຕອນເຄືອອະງຸ່ນຂອງ
ເຈົ້າ ແລະເກັບຜົນລະປູກນັ້ນໄວ້ໃນຫົກປີ [4]ແຕ່ໃນປີທີເຈັດນັ້ນເປັນປີສະບາໂຕແຫ່ງການຢຸດພັກ-
ຜ່ອນສຳລັບແຜ່ນດິນ ເປັນປີສະບາໂຕແດ່ພຣະຜູ້ເປັນເຈົ້າເຈົ້າຢ່າຫວ່ານພືດໃນນາ ຫລືຕອນ
ເຄືອອະງຸ່ນຂອງເຈົ້າ [5]ສິ່ງໃດທີ່ເກີດຂຶ້ນມາເອງໃນນາ ເຈົ້າຢ່າເກັບກ່ຽວ ແລະພວງອະງຸ່ນເກີດຢູ່
ເຄືອທີ່ເຈົ້າບໍ່ໄດ້ຕອນ ກໍຢ່າເກັບ ໃຫ້ເປັນປີທີ່ແຜ່ນດິນຢຸດພັກຜ່ອນ [6]ແຜ່ນດິນໃນປີສະບາໂຕນັ້ນ
ຈະຍັງມີພືດຜົນໃຫ້ແກ່ເຈົ້າທັງຫລາຍ ຄືແກ່ຕົວເຈົ້າເອງ ແກ່ຂ້າທາດຊາຍຂ້າທາດຍິງຂອງເຈົ້າ
ແກ່ລູກຈ້າງຂອງເຈົ້າ ແລະແກ່ຄົນຕ່າງດ້າວທີ່ຢູ່ກັບເຈົ້າ [7]ພືດຜົນແຫ່ງແຜ່ນດິນທັງໝົດຈະເປັນ
ອາຫານຂອງສັດລ້ຽງຂອງເຈົ້າ ແລະຂອງສັດປ່າທີ່ຢູ່ໃນແຜ່ນດິນຂອງເຈົ້າ

## ທຸກໆປີທີຫ້າສິບຄືປີສຽງເຂົາສັດ

[8]ເຈົ້າຈົ່ງນັບປີສະບາໂຕເຈັດປີຄືເອົາເຈັດຄູນເຈັດປີ ປີສະບາໂຕເຈັດປີຈຶ່ງເປັນສີ່ສິບເກົ້າປີແກ່
ເຈົ້າ [9]ເຈົ້າຈົ່ງເປົ່າເຂົາສັດດັງສະໜັ່ນໃນວັນທີສິບເດືອນທີເຈັດ ເຈົ້າຈົ່ງເປົ່າເຂົາສັດທົ່ວແຜ່ນດິນ
ໃນມື້ລຶບລ້າງບາບ [10]ເຈົ້າຈົ່ງຖືປີທີຫ້າສິບໄວ້ເປັນປີບໍລິສຸດ ແລະປະກາດອິດສະຫລະພາບແກ່
ບັນດາຄົນທີ່ອາໄສຢູ່ທົ່ວແຜ່ນດິນຂອງເຈົ້າ ໃຫ້ເປັນປີແຫ່ງສຽງເຂົາສັດແກ່ເຈົ້າ ໃຫ້ທຸກຄົນກັບໄປ

ຍັງພູມລຳເນົາອັນເປັນຊັບສິນຂອງຕົນ ແລະກັບໄປສູ່ຄອບຄົວຂອງຕົນ 11ປີທີຫ້າສິບນັ້ນເປັນປີ
ແຫ່ງສຽງເຂົາສັດຂອງເຈົ້າ ໃນປີນັ້ນເຈົ້າຢ່າຫວ່ານພືດ ຫລືກ່ຽວເກັບຜົນທີ່ເກີດຂຶ້ນມາເອງ ຫລື
ເກັບໝາກອະງຸ່ນຈາກເຄືອທີ່ບໍ່ໄດ້ຕົກແຕ່ງ 12ເພາະເປັນປີແຫ່ງສຽງເຂົາສັດ ຈະເປັນປີບໍລິສຸດແກ່
ເຈົ້າ ເຈົ້າຈົ່ງກິນພືດຜົນທີ່ເກີດມາຈາກນາໃນປີນັ້ນ

13ໃນປີແຫ່ງສຽງເຂົາສັດນີ້ໃຫ້ທຸກຄົນກັບໄປສູ່ພູມລຳເນົາອັນເປັນຊັບສິນຂອງຕົນ 14ຖ້າເຈົ້າ
ຂາຍນາໃຫ້ເພື່ອນບ້ານກໍດີ ຫລືຊື້ຈາກເພື່ອນບ້ານກໍດີ ເຈົ້າຢ່າສໍ້ໂກງກັນ 15ຕາມຈຳນວນປີຫລັງ
ຈາກປີແຫ່ງສຽງເຂົາສັດ ເຈົ້າຈົ່ງຊື້ນາຈາກເພື່ອນບ້ານຂອງເຈົ້າ ແລະໃຫ້ລາວຂາຍແກ່ເຈົ້າຕາມ
ຈຳນວນປີທີ່ປູກພືດໄດ້ 16ຖ້າຫລາຍປີກໍຕ້ອງເພີ່ມລາຄາສູງຂຶ້ນ ຖ້າໜ້ອຍປີເຈົ້າຈົ່ງລຸດລາຄາໃຫ້
ຕໍ່າລົງ ເພາະທີ່ລາວຂາຍນັ້ນ ລາວກໍຂາຍຕາມຈຳນວນປີທີ່ປູກພືດ 17ເຈົ້າຢ່າສໍ້ໂກງກັນ ແຕ່ເຈົ້າ
ຈົ່ງຢຳເກງ**ພຣະເຈົ້າ**ຂອງເຈົ້າ ເພາະເຮົາຄື**ພຣະຜູ້ເປັນເຈົ້າ** **ພຣະເຈົ້າ**ຂອງເຈົ້າ 18ເພາະສະນັ້ນ
ເຈົ້າຈົ່ງເຮັດຕາມກົດເກນຂອງເຮົາ ແລະຮັກສາຄຳຕັດສິນຂອງເຮົາ ແລະປະຕິບັດຕາມ ເພື່ອເຈົ້າ
ຈະອາໄສຢູ່ໃນແຜ່ນດິນນັ້ນໄດ້ຢ່າງປອດໄພ

19ແຜ່ນດິນຈະອຳນວຍຜົນໃຫ້ເຈົ້າໄດ້ກິນຢ່າງອີ່ມໜຳສຳລານ ແລະອາໄສຢູ່ຢ່າງປອດໄພ
20ຖ້າເຈົ້າຈະເວົ້າວ່າ 'ເບິ່ງແມ ຖ້າເຮົາທັງຫລາຍຫວ່ານ ຫລືກ່ຽວພືດຜົນຂອງເຮົາບໍ່ໄດ້ ໃນປີທີ
ເຈັດເຮົາຈະເອົາຫຍັງກິນ' 21ເຮົາຈະບັນຊາພອນຂອງເຮົາໃຫ້ມີເໜືອເຈົ້າໃນປີທີຫົກ ເພື່ອເຈົ້າຈະ
ມີພືດຜົນພໍສຳລັບສາມປີ 22ເມື່ອເຈົ້າຫວ່ານໃນປີທີແປດ ເຈົ້າຈະກິນຂອງເກົ່າຂອງເຈົ້າຈົນປີທີ
ເກົ້າ ເມື່ອເຈົ້າໄດ້ພືດຜົນໃໝ່ເຂົ້າມາ ເຈົ້າກໍຍັງກິນພືດຜົນເກົ່າຂອງເຈົ້າຢູ່ 23ເຈົ້າທັງຫລາຍຈະ
ຂາຍທີ່ດິນຂອງເຈົ້າໃຫ້ຂາດບໍ່ໄດ້ເພາະວ່າດິນນັ້ນເປັນຂອງເຮົາ ເພາະເຈົ້າເປັນແຂກເມືອງແລະ
ເປັນຄົນອາໄສຢູ່ກັບເຮົາ 24ທົ່ວໄປໃນແຜ່ນດິນທີ່ເຈົ້າຍຶດຖືຢູ່ ເຈົ້າຈົ່ງໃຫ້ມີການໄຖ່ຖອນທີ່ດິນຄືນ

## ການໄຖ່ຖອນທີ່ດິນ

25ຖ້າພີ່ນ້ອງຂອງເຈົ້າຍາກຈົນລົງ ແລະຂາຍທີ່ດິນສ່ວນຫນຶ່ງຂອງລາວ ຫາກວ່າມີຜູ້ໃດໃນພີ່-
ນ້ອງຂອງລາວມາໄຖ່ຖອນດິນນັ້ນ ກໍຈົ່ງໃຫ້ລາວໄຖ່ຖອນດິນຊຶ່ງພີ່ນ້ອງຂອງລາວຂາຍໄປນັ້ນ
26ຖ້າຊາຍຄົນນັ້ນບໍ່ມີພີ່ນ້ອງມາໄຖ່ຖອນໃຫ້ ແລະຕົວລາວສາມາດຈະໄຖ່ຖອນເອງ 27ກໍຈົ່ງໃຫ້
ຄົນທີ່ຈະໄຖ່ນັບປີທັງຫລາຍທີ່ລາວຂາຍໄປ ແລະເງິນທີ່ເຫລືອນັ້ນຈົ່ງຄືນໃຫ້ແກ່ຄົນທີ່ລາວຂາຍ
ໃຫ້ ແລະຄົນໄຖ່ກໍເຂົ້າຢູ່ໃນທີ່ດິນຂອງລາວໄດ້ 28ແຕ່ຖ້າລາວບໍ່ສາມາດທີ່ຈະໄຖ່ຄືນມາ ທີ່ດິນທີ່
ລາວໄດ້ຂາຍໄປຢູ່ໃນມືຂອງຜູ້ຊື້ຈົນຮອດປີແຫ່ງສຽງເຂົາສັດ ແລະໃນປີສຽງເຂົາສັດນີ້ ທີ່ດິນຈະ
ອອກໄປ ແລະລາວຈະໄດ້ທີ່ດິນຂອງລາວກັບຄືນມາ

29ຖ້າຜູ້ໃດຂາຍເຮືອນຊຶ່ງຢູ່ໃນເມືອງທີ່ມີກຳແພງ ເມື່ອຂາຍໄປແລ້ວໃຫ້ລາວໄຖ່ຖອນຄືນໄດ້
ພາຍໃນໜຶ່ງປີທຳອິດ ໃຫ້ລາວມີສິດໃນການໄຖ່ຖອນຄືນໄດ້ໜຶ່ງປີເຕັມ 30ຖ້າໃນເວລາໜຶ່ງປີເຕັມ
ລາວບໍ່ເຮັດການໄຖ່ຖອນ ກໍໃຫ້ຜູ້ທີ່ຊື້ໄປຈະມີສິດເໜືອເຮືອນທີ່ຢູ່ໃນເມືອງທີ່ມີກຳແພງນັ້ນ ຕະ-
ຫລອດຊົ່ວອາຍຸຂອງລາວ ໃນປີແຫ່ງສຽງເຂົາສັດ ລາວກໍບໍ່ຕ້ອງຄືນໃຫ້ 31ແຕ່ເຮືອນໃນຊົນນະ-
ບົດທີ່ບໍ່ມີກຳແພງອ້ອມໃຫ້ນັບເຂົ້າເປັນພວກດຽວກັບທົ່ງນາໃນປະເທດນັ້ນ ຄືໄຖ່ຖອນຄືນໄດ້
ແລະຈະຕ້ອງຄືນໃຫ້ເຈົ້າຂອງເດີມໃນປີແຫ່ງສຽງເຂົາສັດ 32ແຕ່ຢ່າງໃດກໍຕາມ ເມືອງຂອງຄົນ

ເລວີ ຫລືເຮືອນໃນເມືອງທີ່ລາວຖືກຳມະສິດ ຄົນເລວີຈະໄຖ່ຖອນຄືນໄດ້ທຸກເວລາ 33ຖ້າຜູ້ໃດຊື້
ສິ່ງຂອງຈາກຄົນເລວີ ເຮືອນຊຶ່ງຖືກຂາຍໄປນັ້ນກັບເມືອງທີ່ລາວຖືກຳມະສິດຕ້ອງກັບຄືນໃນປີ
ແຫ່ງສຽງເຂົາສັດ ເພາະເຮືອນທັງຫລາຍໃນຫົວເມືອງຂອງພວກເລວີກໍເປັນກຳມະສິດຂອງລາວ
ທ່າມກາງພວກອິສຣາເອນ 34ແຕ່ທົ່ງນາທີ່ອ້ອມຮອບຫົວເມືອງທັງຫລາຍຂອງພວກເຂົານັ້ນຈະ
ຂາຍບໍ່ໄດ້ ເພາະວ່າເປັນກຳມະສິດຖາວອນຂອງພວກເຂົາທັງຫລາຍ

## ຂໍ້ຍົກເວັ້ນຕ່າງໆ ເລື່ອງການໄຖ່ຖອນທີ່ດິນ

35ຖ້າພີ່ນ້ອງຂອງເຈົ້າຍາກຈົນລົງ ແລະລ້ຽງຕົວເອງຢູ່ກັບເຈົ້າບໍ່ໄດ້ ເຈົ້າຈະຕ້ອງຊູກຳລັງລາວ
ເຖິງລາວຈະເປັນແຂກເມືອງ ຫລືຄົນອາໄສ ເພື່ອລາວຈະອາໄສຢູ່ກັບເຈົ້າ 36ຢ່າເອົາດອກເບ້ຍ
ຫລືເງິນເພີ່ມຫຍັງຈາກລາວ ແຕ່ຈົ່ງຢຳເກງພຣະເຈົ້າ ເພື່ອວ່າພີ່ນ້ອງຂອງເຈົ້າຈະຢູ່ໃກ້ຊິດກັບ
ເຈົ້າໄດ້ 37ເຈົ້າຢ່າໃຫ້ລາວຢືມເງິນດ້ວຍຄິດດອກເບ້ຍ ຫລືຢ່າໃຫ້ອາຫານເພື່ອເອົາກຳໄລຈາກ
ລາວ 38ເຮົາຄືພຣະຜູ້ເປັນເຈົ້າພຣະເຈົ້າຂອງເຈົ້າ ຊຶ່ງເອົາເຈົ້າອອກຈາກແຜ່ນດິນເອຢິບ ເພື່ອ
ຍົກແຜ່ນດິນການາອານໃຫ້ແກ່ເຈົ້າ ແລະເພື່ອຈະເປັນພຣະເຈົ້າຂອງເຈົ້າ
39ຖ້າພີ່ນ້ອງທີ່ຢູ່ໃກ້ຊິດກັບເຈົ້າຍາກຈົນລົງ ແລະຂາຍຕົວໃຫ້ແກ່ເຈົ້າ ເຈົ້າຢ່າໃຫ້ລາວເຮັດວຽກ
ເໝືອນຂ້າທາດ 40ໃຫ້ລາວຢູ່ກັບເຈົ້າຄືລູກຈ້າງ ຫລືຄົນທີ່ອາໄສຢູ່ດ້ວຍ ໃຫ້ລາວບົວລະບັດເຈົ້າ
ໄປຮອດປີແຫ່ງສຽງເຂົາສັດ 41ແລ້ວລາວ ແລະລູກຫລານຂອງລາວຈະອອກໄປຈາກເຈົ້າກັບໄປ
ສູ່ຄອບຄົວຂອງລາວ ແລະກັບໄປຢູ່ໃນທີ່ດິນຂອງພໍ່ຂອງລາວ 42ເພາະວ່າພວກເຂົາທັງຫລາຍ
ເປັນຂ້າທາດຂອງເຮົາທີ່ເຮົາພາອອກຈາກແຜ່ນດິນເອຢິບ ລາວຈະຂາຍຕົວເປັນຂ້າທາດບໍ່ໄດ້
43ເຈົ້າຢ່າຂົ່ມເຫງລາວໃຫ້ລຳບາກ ແຕ່ຈົ່ງຢຳເກງພຣະເຈົ້າຂອງເຈົ້າ
44ສ່ວນຂ້າທາດຊາຍຍິງຊຶ່ງຈະມີໄດ້ນັ້ນ ເຈົ້າຈະຊື້ຂ້າທາດຊາຍຍິງຈາກທ່າມກາງບັນດາປະ-
ຊາຊາດທີ່ຢູ່ຂ້າງເຈົ້າກໍໄດ້ 45ຍິ່ງກວ່ານັ້ນເຈົ້າຈະຊື້ຈາກຄົນຕ່າງດ້າວທີ່ອາໄສຢູ່ໃນໝູ່ພວກເຈົ້າທັງ
ຄອບຄົວຂອງລາວຊຶ່ງເປັນຄົນເກີດໃນແຜ່ນດິນຂອງເຈົ້າ ແລະລາວຈະຕົກເປັນຊັບສິນຂອງເຈົ້າກໍ
ໄດ້ 46ເຈົ້າຈະມອບພວກເຂົາໃຫ້ເປັນມໍລະດົກແກ່ລູກຫລານຂອງເຈົ້າ ໃຫ້ເປັນມໍລະດົກແກ່ພວກ
ເຂົາ ເປັນກຳມະສິດ ເຈົ້າໃຊ້ພວກເຂົາໄດ້ເໝືອນຂ້າທາດເປັນນິດກໍໄດ້ ແຕ່ເຈົ້າທັງຫລາຍຢ່າ
ປົກຄອງພີ່ນ້ອງຄົນອິສຣາເອນດ້ວຍຄວາມຮຸນແຮງ

## ການໄຖ່ຖອນຄົນອິສຣາເອນທີ່ເປັນຂ້າທາດ

47ຖ້າຄົນຕ່າງດ້າວ ຫລືຄົນທີ່ອາໄສຢູ່ກັບເຈົ້າຮັ່ງມີຂຶ້ນ ແລະພີ່ນ້ອງຂອງເຈົ້າທີ່ຢູ່ໃກ້ຊິດກັບ
ພວກເຂົາຍາກຈົນລົງແລະຂາຍຕົວໃຫ້ແກ່ຄົນຕ່າງດ້າວ ຫລືຜູ້ທີ່ອາໄສຢູ່ກັບເຈົ້ານັ້ນ ຫລືຂາຍໃຫ້
ແກ່ພີ່ນ້ອງຄົນໜຶ່ງຄົນໃດຂອງຄົນຕ່າງດ້າວນັ້ນ 48ເມື່ອລາວຂາຍຕົວແລ້ວກໍໃຫ້ມີການໄຖ່ຖອນ ຄື
ພີ່ນ້ອງຄົນໜຶ່ງຄົນໃດຂອງລາວເຮັດການໄຖ່ຖອນລາວໄດ້ 49ຫລືລຸງ ຫລືລູກພີ່ລູກນ້ອງຈະເຮັດ
ການໄຖ່ຖອນລາວກໍໄດ້ ຫລືພີ່ນ້ອງສະນິດຂອງຄອບຄົວຂອງລາວຈະໄຖ່ຖອນລາວກໍໄດ້ ຫລືຖ້າ
ລາວມີຄວາມສາມາດ ລາວຈະໄຖ່ຖອນຕົວເອງກໍໄດ້ 50ຈົ່ງໃຫ້ຜູ້ທີ່ຂາຍຕົວນັບປີທັງຫລາຍທີ່ຂາຍ
ຕົວກັບຜູ້ທີ່ຊື້ຕົວລາວໄປວ່າ ລາວໄດ້ຂາຍຕົວຈັກປີຈົນຮອດປີແຫ່ງສຽງເຂົາສັດ ຄ່າຕົວຂອງລາວ
ເປັນຄ່າຕາມຈຳນວນປີເຫລົ່ານັ້ນ ເວລາທີ່ລາວຢູ່ກັບເຈົ້າຂອງ ຕົວລາວນັ້ນຈະຄິດຕາມເວລາ

ຂອງລູກຈ້າງ [51]ຖ້າມີເວລາອີກຫລາຍປີ ລາວຕ້ອງຊຳລະເງິນຄືນເທົ່າກັບເງິນທີ່ຖືກຊື້ມາ ນັບ
ເປັນຄ່າໄຖ່ຖອນຕົວລາວ [52]ຖ້າຍັງເຫລືອໜ້ອຍປີຈະຮອດປີແຫ່ງສຽງເຂົາສັດ ກໍໃຫ້ຜູ້ຂາຍຕົວຄິດ
ກັບຜູ້ຊື້ຕົວໄວ້ເປັນລາຄາຄ່າໄຖ່ຂອງລາວນັ້ນ ແລະຕາມຈຳນວນປີເຫລົ່ານັ້ນ ລາວຈະຄືນເງິນໃຫ້
ກັບຜູ້ຊື້ຕົວ [53]ຜູ້ຂາຍຕົວນັ້ນຈະຢູ່ກັບຜູ້ຊື້ຕົວດັ່ງລູກຈ້າງທີ່ຈ້າງເປັນປີ ຢ່າໃຫ້ນາຍປົກຄອງຂົ່ມເຫງ
ລາວໃນສາຍຕາຂອງເຈົ້າ [54]ຖ້າລາວບໍ່ໄຖ່ຖອນຕາມທີ່ກ່າວມານີ້ກໍໃຫ້ປ່ອຍລາວໃນປີແຫ່ງສຽງ
ເຂົາສັດ ທັງລາວພ້ອມກັບລູກຂອງລາວ [55]ສຳລັບເຮົາ ຄົນອິສຣາເອນເປັນຂ້າທາດຂອງເຮົາ
ພວກເຂົາເປັນຂ້າທາດຂອງເຮົາທີ່ເຮົາພາອອກຈາກແຜ່ນດິນເອຢິບ ເຮົາຄືພຣະຜູ້ເປັນເຈົ້າ
ພຣະເຈົ້າຂອງເຈົ້າ"

# ບົດທີ 26

## ພຣະບັນຍັດຕ່າງໆ ເລື່ອງວັນສະບາໂຕ ແລະຮູບເຄົາລົບ

[1]"ເຈົ້າທັງຫລາຍຢ່າເຮັດຮູບເຄົາລົບ ຫລືຮູບແກະສະຫລັກສຳລັບຕົວເຈົ້າ ຫລືຕັ້ງເສົາສັກສິດ
ແລະເຈົ້າທັງຫລາຍຢ່າຕັ້ງສິ່ງໃດໆທີ່ເປັນຮູບຮ່າງສັນຖານໃດດ້ວຍສີລາໄວ້ໃນແຜ່ນດິນຂອງເຈົ້າ
ເພື່ອການຂາບໄຫວ້ເພາະເຮົາຄືພຣະຜູ້ເປັນເຈົ້າພຣະເຈົ້າຂອງເຈົ້າ [2]ເຈົ້າຈົ່ງຖືຮັກສາວັນສະບາ
ໂຕທັງຫລາຍຂອງເຮົາ ແລະນັບຖືວິຫານອັນເປັນສະຖານທີ່ບໍລິສຸດຂອງເຮົາ ເຮົາຄືພຣະຜູ້ເປັນ-
ເຈົ້າ

## ພຣະພອນສຳລັບຄົນທີ່ປະພຶດຊອບທຳ

[3]ຖ້າເຈົ້າທັງຫລາຍດຳເນີນຕາມກົດເກນຂອງເຮົາແລະຮັກສາບັນຍັດຂອງເຮົາ ແລະເຮັດຕາມ
ບັນຍັດນັ້ນ [4]ເຮົາຈະປະທານຝົນຕາມລະດູແກ່ເຈົ້າ ແລະແຜ່ນດິນຈະເກີດພືດຜົນ ແລະຕົ້ນໄມ້
ໃນທົ່ງຈະເກີດໝາກ [5]ແລະເວລາຟາດເຂົ້າຈະເຍີ້ນດົນໄປຮອດລະດູເກັບໝາກອະງຸ່ນ ແລະລະດູ
ເກັບໝາກອະງຸ່ນຈະເຍີ້ນດົນໄປຮອດລະດູຫວ່ານ ແລະເຈົ້າຈະກິນອາຫານຢ່າງອີ່ມໜຳສຳລານ
ແລະຢູ່ໃນແຜ່ນດິນຂອງເຈົ້າຢ່າງປອດໄພ [6]ເຮົາຈະໃຫ້ມີຄວາມສະຫງົບສຸກໃນແຜ່ນດິນ ເຈົ້າທັງ-
ຫລາຍຈະນອນຫລັບ ແລະບໍ່ມີຜູ້ໃດທີ່ຈະເຮັດໃຫ້ເຈົ້າຢ້ານ ເຮົາຈະກຳຈັດສັດຮ້າຍຈາກແຜ່ນດິນ
ແລະດາບຈະບໍ່ຜ່ານແຜ່ນດິນຂອງເຈົ້າເລີຍ [7]ເຈົ້າຈະຂັບໄລ່ສັດຕູຂອງເຈົ້າ ແລະພວກເຂົາທັງ-
ຫລາຍຈະຕໍ່ສູ້ຈົນລົ້ມລົງຕໍ່ໜ້າເຈົ້າດ້ວຍດາບ [8]ພວກເຈົ້າຫ້າຄົນຈະຂັບໄລ່ສັດຕູຮ້ອຍຄົນ ແລະ
ພວກເຈົ້າຮ້ອຍຄົນຈະຂັບໄລ່ສັດຕູໝື່ນຄົນໃຫ້ກະຈັດ ກະຈາຍໄປ ແລະສັດຕູຂອງເຈົ້າຈະຕໍ່ສູ້ຈົນ
ລົ້ມລົງດ້ວຍດາບຕໍ່ໜ້າເຈົ້າ [9]ເພາະເຮົາຈະຄິດເຖິງເຈົ້າ ຈະເຮັດໃຫ້ເຈົ້າມີລູກດົກ ແລະທະວີ
ຫລາຍຂຶ້ນ ແລະຕັ້ງຄຳໝັ້ນສັນຍາຂອງເຮົາໄວ້ກັບເຈົ້າ [10]ເຈົ້າຈະໄດ້ກິນຂອງທີ່ສະສົມໄວ້ດົນ
ແລະເຈົ້າຈະຕ້ອງເອົາຂອງເກົ່າອອກໄປເພາະເຫດຂອງໃໝ່ນັ້ນ

[11]ແລະເຮົາຈະຕັ້ງທຳເຕັນຂອງເຮົາໄວ້ທ່າມກາງເຈົ້າທັງຫລາຍ ແລະຈິດໃຈຂອງເຮົາຈະບໍ່ກຽດ
ຊັງເຈົ້າ [12]ເຮົາຈະດຳເນີນໃນໝູ່ພວກເຈົ້າ ແລະຈະເປັນພຣະເຈົ້າຂອງເຈົ້າ ແລະເຈົ້າຈະເປັນໄພ່
ພົນຂອງເຮົາ [13]ເຮົາຄືພຣະຜູ້ເປັນເຈົ້າພຣະເຈົ້າຂອງເຈົ້າ ຜູ້ເອົາເຈົ້າອອກຈາກແຜ່ນດິນເອຢິບ
ເພື່ອເຈົ້າຈະບໍ່ໄດ້ເປັນຂ້າທາດຂອງພວກເຂົາ ເຮົາໄດ້ຫັກໂສ້ທີ່ລາມແອກຂອງເຈົ້າອອກ ເພື່ອໃຫ້

ເຈົ້າຢືນຕົວ ແລະທຽວໄປມາໄດ້

## ໂທດຕ່າງໆທີ່ເປັນຜົນຈາກຄວາມບາບ

[14]ຖ້າເຈົ້າບໍ່ໄດ້ເຊື່ອຟັງເຮົາ ແລະບໍ່ເຮັດຕາມບັນຍັດທັງໝົດເຫລົ່ານີ້ [15]ຖ້າເຈົ້າປະຕິເສດກົດ-
ເກນຂອງເຮົາ ແລະໃຈຂອງເຈົ້າບໍ່ເຮັດຕາມຄຳຕັດສິນຂອງເຮົາ ເຈົ້າຈຶ່ງບໍ່ເຮັດຕາມບັນຍັດ ທັງ
ໝົດ ຂອງເຮົາ ແຕ່ທຳລາຍຄຳໝັ້ນສັນຍາຂອງເຮົາ [16]ເຮົາກໍຈະເຮັດດັ່ງນີ້ແກ່ເຈົ້າ ຄືເຮົາຈະຕັ້ງ
ຄວາມຢ້ານກົວຕໍ່ໜ້າເຈົ້າ ຄວາມອ່ອນແອ ແລະຄວາມເຈັບໄຂ້ ຊຶ່ງເຮັດໃຫ້ໄນຕາຂຸດໂຊມ ແລະ
ເຮັດໃຫ້ຈິດໃຈເສົ້າໝອງ ເຈົ້າທັງຫລາຍຈະຫວ່ານພືດໄວ້ ແຕ່ພວກສັດຕູຂອງເຈົ້າຈະມາກິນ
[17]ເຮົາຈະຕັ້ງໜ້າຂອງເຮົາຕໍ່ສູ້ເຈົ້າ ເຈົ້າຈະຕໍ່ສູ້ຈົນຕາຍຕໍ່ໜ້າສັດຕູຂອງເຈົ້າທັງຫລາຍ ຄົນທີ່ກຽດ
ຊັງເຈົ້າຈະປົກຄອງຢູ່ເໜືອເຈົ້າ ເຈົ້າຈະຫລົບໜີໄປ ໂດຍທີ່ບໍ່ມີໃຜໄລ່ຕິດຕາມ

[18]ຖ້າເຈົ້າທັງຫລາຍຍັງບໍ່ເຊື່ອຟັງເຮົາ ເພາະສິ່ງທັງປວງເຫລົ່ານີ້ ເຮົາຈຶ່ງຈະລົງໂທດເຈົ້າທັງ-
ຫລາຍໃຫ້ທະວີຂຶ້ນອີກເຈັດເທົ່າເພາະການບາບຂອງເຈົ້າ [19]ເຮົາຈະທຳລາຍຄວາມຈອງຫອງຄື
ກຳລັງອຳນາດຂອງເຈົ້າ ເຮົາຈະເຮັດໃຫ້ຟ້າສະຫວັນຂອງເຈົ້າເໝືອນເຫລັກ ແລະພື້ນດິນຂອງ
ເຈົ້າເໝືອນທອງເຫລືອງ [20]ເຈົ້າທັງຫລາຍຈະໝົດກຳລັງໄປລ້າໆ ເພາະວ່າແຜ່ນດິນຂອງເຈົ້າຈະ
ບໍ່ມີພືດຜົນ ແລະຕົ້ນໄມ້ໃນແຜ່ນດິນກໍຈະບໍ່ບັງເກີດຜົນ

[21]ຖ້າເຈົ້າຍັງຂັດແຍ້ງກັບເຮົາຢູ່ ແລະບໍ່ເຊື່ອຟັງເຮົາ ເຮົາຈະນຳເອົາໄພພິບັດທີ່ທະວີອີກເຈັດ
ເທົ່າມາຍັງເຈົ້າຕາມການບາບທັງຫລາຍຂອງເຈົ້າ [22]ເຮົາຈະປ່ອຍສັດປ່າໃຫ້ມາໃນໝູ່ພວກເຈົ້າ
ດ້ວຍ ມັນຈະປຸ້ນເອົາລູກຫລານຂອງເຈົ້າ ແລະທຳລາຍສັດລ້ຽງຂອງເຈົ້າ ແລະເຮັດໃຫ້ເຈົ້າ
ເຫລືອໜ້ອຍ ແລະຖະໜົນຫົນທາງຂອງເຈົ້າຈະເປົ່າຮ້າງ

[23]ແລະຖ້າດ້ວຍສິ່ງເຫລົ່ານີ້ ເຈົ້າຍັງບໍ່ຫັນມາຫາເຮົາ ແລະຍັງມີການປະພຶດທີ່ຂັດແຍ້ງກັບເຮົາ
ຢູ່ [24]ແລ້ວເຮົາກໍຈະຂັດແຍ້ງກັບເຈົ້າທັງຫລາຍດ້ວຍ ແລະຈະລົງໂທດເຈົ້າໃຫ້ທະວີອີກເຈັດເທົ່າ
ເພາະການບາບທັງຫລາຍຂອງເຈົ້າ [25]ເຮົາຈະເອົາດາບມາເໜືອເຈົ້າ ຊຶ່ງລົງໂທດເຈົ້າຕາມຄຳ-
ໝັ້ນສັນຍາ ຖ້າເຈົ້າເຂົ້າມາລວມກັນຢູ່ໃນເມືອງ ເຮົາຈະເອົາພະຍາດຮ້າຍມາໃນໝູ່ພວກເຈົ້າ
ແລະເຈົ້າຈະຕົກຢູ່ໃນມືຂອງສັດຕູ [26]ເມື່ອເຮົາທຳລາຍສະບຽງອາຫານຂອງເຈົ້າ ຜູ້ຍິງສິບຄົນຈະ
ປີ້ງເຂົ້າຈີ່ຂອງເຈົ້າດ້ວຍເຕົາອົບອັນດຽວ ແລ້ວເອົາເຂົ້າຈີ່ມາຊັ່ງໃຫ້ເຈົ້າ ເຈົ້າຈະກິນແຕ່ຈະບໍ່ອີ່ມ

[27]ແລະຖ້າເປັນແບບນີ້ແລ້ວ ເຈົ້າຍັງບໍ່ເຊື່ອຟັງເຮົາ ແຕ່ຍັງປະພຶດຂັດແຍ້ງກັບເຮົາ [28]ເຮົາກໍຈະ
ຂັດແຍ້ງກັບເຈົ້າຢ່າງຮຸນແຮງຂຶ້ນ ແລະເຮົາເອງຈະລົງໂທດເຈົ້າໃຫ້ທະວີອີກເຈັດເທົ່າເພາະການ
ບາບທັງຫລາຍຂອງເຈົ້າ [29]ເຈົ້າຈະກິນຊີ້ນລູກຊາຍຂອງເຈົ້າ ແລະເຈົ້າຈະກິນຊີ້ນລູກສາວຂອງ
ເຈົ້າ [30]ເຮົາຈະທຳລາຍສະຖານທີ່ສູງທັງຫລາຍຂອງເຈົ້າ ແລະທຳລາຍຮູບເຄົາລົບທັງຫລາຍ
ຂອງເຈົ້າ ແລະໂຍນສົບຂອງເຈົ້າລົງເທິງຊາກຮູບເຄົາລົບຂອງເຈົ້າ ແລະຈິດໃຈຂອງເຮົາຈະກຽດ
ຊັງເຈົ້າ [31]ເຮົາຈະໃຫ້ເມືອງຂອງເຈົ້າຮ້າງ ແລະຈະເຮັດໃຫ້ສະຖານທີ່ບໍລິສຸດຂອງເຈົ້າວ່າງເປົ່າ
ແລະເຮົາຈະບໍ່ດົມກິ່ນຫອມຫວານຂອງເຈົ້າ

## ຄຳຂອງຜູ້ປະກາດພຣະທຳເລື່ອງການເປັນຊະເລີຍ ແລະ ການກະຈັດກະຈາຍໄປ

32ແລະເຮົາຈະໃຫ້ແຜ່ນດິນຂອງເຈົ້າເປົ່າຮ້າງຈົນສັດຕູຂອງເຈົ້າຜູ້ຈະມາອາໄສຢູ່ໃນນັ້ນປະ-
ຫລາດໃຈ 33ແລະເຮົາຈະໃຫ້ພວກເຈົ້າກະຈັດກະຈາຍໄປຢູ່ໃນບັນດາປະຊາຊາດ ແລະເຮົາຈະ
ໃຫ້ດາບອອກຈາກຝັກໄລ່ຕິດຕາມເຈົ້າ ແລະແຜ່ນດິນຂອງເຈົ້າຈະເພຮ້າງ ແລະເມືອງຂອງເຈົ້າ
ຈະວ່າງເປົ່າ

34ເມື່ອເຈົ້າໄປຢູ່ໃນແຜ່ນດິນຂອງສັດຕູ ແຜ່ນດິນຂອງເຈົ້າຈະໄດ້ຊົມຊື່ນກັບວັນສະບາໂຕ ເທົ່າ
ທີ່ວ່າງເປົ່າຢູ່ ແຜ່ນດິນກໍຈະໄດ້ຢຸດພັກ ແລະຊົມຊື່ນກັບວັນສະບາໂຕເຫລົ່ານັ້ນ 35ຕາບໃດທີ່
ແຜ່ນດິນວ່າງເປົ່າຢູ່ ແຜ່ນດິນກໍຈະໄດ້ຢຸດພັກ ເພາະບໍ່ເຄີຍໄດ້ຢຸດພັກໃນວັນສະບາໂຕເລີຍ
ຕອນທີ່ເຈົ້າອາໄສຢູ່ໃນແຜ່ນດິນນັ້ນ

36ສ່ວນພວກເຈົ້າທັງຫລາຍທີ່ຍັງເຫລືອຢູ່ ເຮົາຈະໃຫ້ພວກເຂົາມີໃຈອ່ອນແອລົງໃນແຜ່ນດິນ
ຂອງສັດຕູ ຈົນສຽງເພັງຂອງໃບໄມ້ຈະໄລ່ຕິດຕາມພວກເຂົາ ແລະພວກເຂົາຈະໜີຄືກັບຄົນໜີ
ຈາກດາບ ແລະເຂົາເຈົ້າຈະຕໍ່ສູ້ ທັງທີ່ບໍ່ມີຄົນໄລ່ຕິດຕາມມາ 37ແລະພວກເຂົາທັງຫລາຍຈະຊູນ
ສະດຸດຈົນລົ້ມທັບກັນແລະກັນ ຄືກັບຄົນໜີດາບ ທັງທີ່ບໍ່ມີຄົນຕິດຕາມມາ ແລະເຈົ້າຈະບໍ່ມີກຳລັງ
ຕໍ່ຕ້ານສັດຕູຂອງເຈົ້າ 38ເຈົ້າທັງຫລາຍຈະຈິບຫາຍໄປທ່າມກາງບັນດາປະຊາຊາດ ແລະແຜ່ນ-
ດິນຂອງສັດຕູຂອງເຈົ້າຈະກືນກິນເຈົ້າ

39ສ່ວນເຈົ້າທັງຫລາຍທີ່ເຫລືອຢູ່ຈະຊຸດໂຊມໄປໃນແຜ່ນດິນສັດຕູຂອງເຈົ້າ ເພາະຄວາມຊົ່ວຊ້າ
ຂອງຕົນ ແລະເພາະຄວາມຊົ່ວຊ້າຂອງບັນພະບຸລຸດຂອງຕົນ ພວກເຂົາຈະຕ້ອງຊຸດໂຊມໄປຄືກັບ
ບັນພະບູລຸດດ້ວຍ

## ພຣະເຈົ້າໄດ້ຮັກສາຄຳໝັ້ນສັນຍາຂອງພຣະອົງຕໍ່ອັບຣາຮາມ

40ແຕ່ຖ້າພວກເຂົາສາລະພາບຄວາມຊົ່ວຊ້າຂອງຕົນ ແລະຄວາມຊົ່ວຊ້າຂອງບັນພະບູລຸດ ຊຶ່ງ
ພວກເຂົາໄດ້ເຮັດການທີ່ບໍ່ສັດຊື່ຕໍ່ເຮົາ ດ້ວຍການບໍ່ສັດຊື່ຂອງພວກເຂົານັ້ນ ແລະໄດ້ປະພຶດຂັດ
ແຍ້ງກັບເຮົາດ້ວຍ 41ແລະເຮົາຈຶ່ງຂັດແຍ້ງກັບພວກເຂົາ ແລະໄດ້ເອົາພວກເຂົາເຂົ້າໄປໃນແຜ່ນ-
ດິນຂອງສັດຕູ ຖ້າຕອນນັ້ນ ຈິດໃຈອັນນອກຮີດຂອງເຂົາເຈົ້າຖ່ອມລົງແລ້ວ ແລະພວກເຂົາ
ຍອມຮັບໂທດ ຕາມຄວາມຊົ່ວຊ້າຂອງຕົນແລ້ວ 42ເຮົາຈຶ່ງຈະລະນຶກເຖິງຄຳໝັ້ນສັນຍາຂອງເຮົາ
ຊຶ່ງມີຕໍ່ຢາໂຄບ ແລະຄຳໝັ້ນສັນຍາຂອງເຮົາຊຶ່ງມີຕໍ່ອີຊາກ ແລະຄຳໝັ້ນສັນຍາຂອງເຮົາຊຶ່ງມີຕໍ່
ອັບຣາຮາມ ແລະເຮົາຈະລະນຶກເຖິງແຜ່ນດິນນັ້ນ 43ແຕ່ພວກເຂົາຍັງຕ້ອງຖິ້ມແຜ່ນດິນນັ້ນໄວ້
ແລະແຜ່ນດິນຈະຊົມຊື່ນກັບວັນສະບາໂຕ ຊຶ່ງໄດ້ວ່າງເປົ່າໂດຍທີ່ບໍ່ມີພວກເຂົາທັງຫລາຍອາໄສຢູ່
ພວກເຂົາຈຶ່ງຍອມຮັບໂທດເພາະຄວາມຊົ່ວຊ້າຂອງຕົນ ດ້ວຍເລື່ອງການປະຕິເສດຄຳຕັດສິນ
ຂອງເຮົາ ແລະຈິດໃຈຂອງພວກເຂົາທີ່ກຽດຊັງກົດເກນຂອງເຮົາ 44ເຖິງປານນັ້ນກໍດີ ເມື່ອເຂົາ-
ເຈົ້າຢູ່ໃນແຜ່ນດິນຂອງສັດຕູ ເຮົາຈະບໍ່ປະຖິ້ມພວກເຂົາ ເຮົາຈະບໍ່ກຽດຊັງພວກເຂົາເຖິງກັບຈະ
ທຳລາຍພວກເຂົາໃຫ້ໝົດເທື່ອດຽວ ແລະທຳລາຍຄຳໝັ້ນສັນຍາຊຶ່ງມີກັບພວກເຂົາ ເພາະເຮົາຄື
ພຣະຜູ້ເປັນເຈົ້າພຣະເຈົ້າຂອງພວກເຂົາ 45ເພາະເຫັນແກ່ພວກເຂົາ ເຮົາຈະລະນຶກເຖິງຄຳໝັ້ນ-

ສັນຍາທີ່ມີຕໍ່ບັນພະບູລຸດຂອງເຂົາເຈົ້າ ຜູ້ຊຶ່ງເຮົາໄດ້ພາອອກມາຈາກແຜ່ນດິນ ເອຢິບ ຕໍ່ໜ້າຕໍ່ຕາ
ຂອງບັນດາປະຊາຊາດ ເພື່ອເຮົາຈະໄດ້ເປັນ ພຣະເຈົ້າ ຂອງພວກເຂົາ ເຮົາຄື ພຣະຜູ້ເປັນເຈົ້າ”
46ສິ່ງ ເຫລົ່ານີ້ເປັນກົດເກນ ແລະຄຳຕັດສິນ ແລະກົດໝາຍ ຊຶ່ງ ພຣະຜູ້ເປັນເຈົ້າ ໄດ້ໃຫ້ໄວ້
ລະຫວ່າງພຣະອົງກັບຊົນຊາດ ອິສຣາເອນ ເທິງພູເຂົາຊີນາຍ ໂດຍມືຂອງ ໂມເຊ

# ບົດທີ 27

## ພຣະບັນຍັດຕ່າງໆ ເລື່ອງຄຳສັນຍາ

1ພຣະຜູ້ເປັນເຈົ້າ ກ່າວກັບ ໂມເຊ ວ່າ 2“ຈົ່ງກ່າວ ແກ່ຄົນ ອິສຣາເອນ ວ່າ ເມື່ອຜູ້ໃດປະຕິຍານ
ເປັນພິເສດໄວ້ ບຸກຄົນຜູ້ທີ່ປະຕິຍານໄວ້ນັ້ນ ກໍເປັນຂອງ ພຣະຜູ້ເປັນເຈົ້າ ຕາມລາຄາຂອງເຈົ້າ
3ໃຫ້ເຈົ້າກຳນົດລາຄາດັ່ງນີ້ ຜູ້ຊາຍອາຍຸຕັ້ງແຕ່ຊາວເຖິງຫົກສິບປີຈະເປັນເງິນຫ້າສິບເຊເຂຕາມເຊ
ເຂຂອງສະຖານທີ່ບໍລິສຸດ 4ຖ້າຜູ້ນັ້ນເປັນຜູ້ຍິງ ໃຫ້ເຈົ້າກຳນົດລາຄາເປັນເງິນສາມສິບເຊເຂ 5ຖ້າ
ຜູ້ນັ້ນອາຍຸຫ້າປີຫາຊາວປີ ໃຫ້ເຈົ້າກຳນົດລາຄາຜູ້ຊາຍເປັນເງິນຊາວເຊເຂ ແລະຜູ້ຍິງສິບເຊເຂ
6ຖ້າຜູ້ນັ້ນອາຍຸໜຶ່ງເດືອນຫາຫ້າປີ ໃຫ້ເຈົ້າກຳນົດລາຄາຜູ້ຊາຍເປັນເງິນຫ້າເຊເຂ ໃຫ້ເຈົ້າກຳນົດ
ລາຄາຜູ້ຍິງເປັນເງິນສາມເຊເຂ 7ຖ້າເປັນບຸກຄົນອາຍຸຕັ້ງແຕ່ຫົກສິບປີຂຶ້ນໄປ ໃຫ້ເຈົ້າກຳນົດລາ-
ຄາຜູ້ຊາຍເປັນເງິນສິບຫ້າເຊເຂ ແລະຜູ້ຍິງເປັນສິບເຊເຂ 8ແຕ່ຖ້າຜູ້ນັ້ນເປັນຄົນຍາກຈົນ ບໍ່ມີພໍ
ຕາມທີ່ເຈົ້າໄດ້ກຳນົດຄ່າໄວ້ ກໍໃຫ້ລາວໄປຫາປະໂລຫິດ ໃຫ້ປະໂລຫິດກຳນົດລາຄາຕາມຄວາມ
ສາມາດຂອງຜູ້ທີ່ປະຕິຍານ ປະໂລຫິດຈະກຳນົດລາຄາຂອງຄົນນັ້ນ
9ຖ້າເປັນສັດແບບທີ່ມະນຸດເອົາມາຖວາຍ ພຣະຜູ້ເປັນເຈົ້າ ສິ່ງໃດໆທີ່ມະນຸດຖວາຍແດ່ ພຣະ-
ຜູ້ເປັນເຈົ້າ ກໍຖືວ່າເປັນຂອງບໍລິສຸດ 10ຢ່າໃຫ້ລາວເອົາຫຍັງມາແທນ ຫລືປ່ຽນ ເອົາອັນດີມາປ່ຽນ
ອັນບໍ່ດີ ຫລືເອົາອັນບໍ່ດີມາປ່ຽນອັນດີ ຖ້າລາວປ່ຽນສັດ ທັງໂຕທີ່ເອົາມາປ່ຽນ ແລະໂຕທີ່ຖືກປ່ຽນ
ຈະຕ້ອງບໍລິສຸດ 11ຖ້າເປັນສັດທີ່ມີມົນທິນຢ່າງໜຶ່ງຢ່າງໃດ ຊຶ່ງເອົາມາຖວາຍແດ່ ພຣະຜູ້ເປັນເຈົ້າ
ໃຫ້ຜູ້ນັ້ນເອົາສັດໂຕນັ້ນໄປຫາປະໂລຫິດ 12ແລ້ວປະໂລຫິດຈະຕີລາຄາວ່າເປັນຂອງດີ ຫລືຂອງບໍ່
ດີ ຫາກປະໂລຫິດໄດ້ກຳນົດລາຄາເທົ່າໃດ ກໍໃຫ້ເປັນເທົ່ານັ້ນ 13ຖ້າລາວຈະມາໄຖ່ສັດນັ້ນ ກໍໃຫ້
ລາວເພີ່ມອີກໜຶ່ງໃນຫ້າຂອງລາຄາທີ່ຕີໄວ້
14ເມື່ອຄົນໃດຖວາຍເຮືອນຂອງຕົນໄວ້ເປັນຂອງບໍລິສຸດແດ່ ພຣະຜູ້ເປັນເຈົ້າ ປະໂລຫິດຕ້ອງຕີ
ລາຄາຕາມດີ ຫລືບໍ່ດີ ຫາກປະໂລຫິດກຳນົດລາຄາເທົ່າໃດ ກໍໃຫ້ເປັນເທົ່ານັ້ນ 15ຖ້າຜູ້ທີ່ຖວາຍ
ເຮືອນໄວ້ປະສົງຈະໄຖ່ເຮືອນຂອງຕົນ ກໍໃຫ້ຜູ້ນັ້ນເພີ່ມເງິນອີກໜຶ່ງໃນຫ້າຂອງລາຄາເຮືອນທີ່ຕີໄວ້
ແລ້ວເຮືອນນັ້ນຈຶ່ງຕົກເປັນຂອງລາວອີກ
16ຖ້າຜູ້ໃດຖວາຍດິນສ່ວນໜຶ່ງແດ່ ພຣະຜູ້ເປັນເຈົ້າ ຊຶ່ງເປັນມໍລະດົກຕົກທອດຂອງເຂົາ ໃຫ້
ເຈົ້າກຳນົດລາຄາຂອງດິນຕາມຈຳນວນ ເມັດພືດທີ່ຫວ່ານລົງໃນດິນນັ້ນ ຖ້າດິນນາໃຊ້ເມັດເຂົ້າ
ເດືອຍສິບບຸງ ໃຫ້ກຳນົດລາຄາເປັນເງິນຫ້າສິບເຊເຂ 17ຖ້າລາວຖວາຍນາໃນປີແຫ່ງສຽງເຂົາສັດ
ກໍໃຫ້ຄົບເຕັມລາຄາທີ່ເຈົ້າກຳນົດ 18ຖ້າລາວຖວາຍດິນນາ ຫລັງຈາກປີແຫ່ງສຽງເຂົາສັດ ກໍໃຫ້
ປະໂລຫິດຄິດໄລ່ເງິນຕາມຈຳນວນປີທີ່ເຫລືອຢູ່ຈົນຮອດປີແຫ່ງສຽງເຂົາສັດ ໃຫ້ຫັກຈາກລາຄາທີ່

ເຈົ້າກຳນົດ [19]ຖ້າຜູ້ທີ່ຖວາຍນາປະສົງຈະໄຖ່ນານັ້ນ ກໍໃຫ້ລາວເພີ່ມຄ່າເງິນອີກໜຶ່ງໃນຫ້າຂອງ
ລາຄາທີ່ຕີໄວ້ ແລ້ວນານັ້ນກໍຈະຕົກເປັນຂອງລາວອີກ [20]ແຕ່ຖ້າລາວບໍ່ປະສົງທີ່ຈະໄຖ່ນາ ຫລື
ລາວໄດ້ຂາຍນານັ້ນໃຫ້ອີກຄົນໜຶ່ງແລ້ວ ກໍຢ່າໃຫ້ໄຖ່ຄືນອີກເລີຍ [21]ແຕ່ນານັ້ນ ເມື່ອສະລະໄປ
ໃນປີແຫ່ງສຽງເຂົາສັດ ກໍເປັນຂອງບໍລິສຸດແດ່ພຣະຜູ້ເປັນເຈົ້າ ປະໂລຫິດຈຶ່ງເຂົ້າຖືກຳມະສິດນາ
ນັ້ນໄດ້

[22]ຖ້າຄົນໃດຊື້ນາມາຖວາຍແດ່ພຣະຜູ້ເປັນເຈົ້າ ຊຶ່ງບໍ່ແມ່ນມໍລະດົກທີ່ຕົກເປັນກຳມະສິດຂອງ
ຕົນ [23]ປະໂລຫິດຈະຄິດໄລ່ຄ່ານານັບຈົນຮອດປີແຫ່ງສຽງເຂົາສັດ ໃນມື້ນັ້ນ ເຈົ້າຂອງນາຕ້ອງ
ຖວາຍເງິນເທົ່າກັບຄ່ານາທີ່ຕີໄວ້ ເປັນຂອງບໍລິສຸດແດ່ພຣະຜູ້ເປັນເຈົ້າ [24]ເມື່ອຮອດປີແຫ່ງສຽງ
ເຂົາສັດ ນານັ້ນຕ້ອງກັບໄປຕົກເປັນຂອງຜູ້ທີ່ຂາຍໃຫ້ລາວ ຊຶ່ງເປັນເຈົ້າຂອງເດີມ ຕາມມໍລະດົກ
ທີ່ຕົກມາເປັນຂອງລາວ [25]ການຕີລາຄາທຸກຢ່າງຈະຕ້ອງເປັນໄປຕາມຄ່າເງິນເຊເຂຂອງສະຖານ-
ທີ່ບໍລິສຸດ ຊາວເກົ້າເກຣະ ເປັນໜຶ່ງເຊເຂ

## ຢ່າໃຫ້ໃຜຂາຍລູກສັດຫົວປີ ຫລືສິ່ງທີ່ຖວາຍແລ້ວ

[26]ແຕ່ລູກສັດຫົວປີນັ້ນຢ່າໃຫ້ໃຜເອົາມາຖວາຍ ເພາະສັດຫົວປີກໍຕົກເປັນຂອງພຣະຜູ້ເປັນເຈົ້າ
ແລ້ວ ງົວກໍດີ ແກະກໍດີ ເປັນຂອງພຣະຜູ້ເປັນເຈົ້າ [27]ຖ້າເປັນສັດທີ່ມີມົນທິນ ຈຶ່ງໃຫ້ເຂົາເຈົ້າຊື້
ຄືນຕາມລາຄາຂອງເຈົ້າ ໂດຍເພີ່ມໜຶ່ງໃນຫ້າຂອງລາຄາທີ່ຕີໄວ້ ຖ້າເຂົາເຈົ້າບໍ່ໄຖ່ ກໍໃຫ້ຂາຍ
ຕາມລາຄາທີ່ຕີໄວ້

[28]ແຕ່ສິ່ງໃດທີ່ຖວາຍແດ່ພຣະຜູ້ເປັນເຈົ້າ ເປັນສິ່ງທີ່ລາວມີຢູ່ ບໍ່ວ່າເປັນຄົນ ຫລືສັດ ຫລືທົ່ງ
ນາອັນເປັນມໍລະດົກຕົກທອດຂອງເຂົາ ຈະຂາຍ ຫລືໄຖ່ບໍ່ໄດ້ອີກ ເພາະສິ່ງທີ່ຖວາຍແລ້ວ ກໍເປັນ
ຂອງບໍລິສຸດທີ່ສຸດແດ່ພຣະຜູ້ເປັນເຈົ້າ [29]ທຸກສິ່ງທີ່ຖືກຖວາຍແລ້ວ ຄືສິ່ງທີ່ຕ້ອງທຳລາຍຈາກມະ-
ນຸດ ຢ່າໃຫ້ໄຖ່ຖອນ ຜູ້ນັ້ນຈະຕ້ອງຖືກຂ້າແນ່ນອນ

## ເລື່ອງໜຶ່ງສ່ວນສິບ ທຸກສິ່ງ ທັງໝົດ ເປັນຂອງພຣະຜູ້ເປັນເຈົ້າ

[30]ໜຶ່ງສ່ວນສິບທັງໝົດທີ່ໄດ້ຈາກແຜ່ນດິນ ເປັນພືດທີ່ໄດ້ຈາກແຜ່ນດິນກໍດີ ຫລືຜົນຈາກຕົ້ນໄມ້
ກໍດີເປັນຂອງພຣະຜູ້ເປັນເຈົ້າ ເປັນຂອງບໍລິສຸດແດ່ພຣະຜູ້ເປັນເຈົ້າ [31]ຖ້າຄົນໃດປະສົງຈະໄຖ່
ໜຶ່ງສ່ວນສິບສ່ວນໃດຂອງຕົນ ລາວຕ້ອງເພີ່ມອີກໜຶ່ງໃນຫ້າຂອງໜຶ່ງສ່ວນສິບນັ້ນ [32]ແລະໜຶ່ງ
ສ່ວນສິບທີ່ໄດ້ມາຈາກຝູງງົວ ຫລືຝູງແບ້ ແກະ ຄືສັດໜຶ່ງໃນສິບໂຕທີ່ລອດກ້ອງໄມ້ເທົ້າຂອງຜູ້
ລ້ຽງ ຈະເປັນສິ່ງບໍລິສຸດແດ່ພຣະຜູ້ເປັນເຈົ້າ [33]ຢ່າໃຫ້ພິຈາລະນາວ່າດີ ຫລືບໍ່ດີ ຢ່າໃຫ້ລາວສັບ
ປ່ຽນ ຖ້າລາວສັບປ່ຽນ ທັງໂຕທີ່ເອົາມາປ່ຽນກັບໂຕທີ່ຖືກປ່ຽນເປັນຂອງບໍລິສຸດແລ້ວ ໄຖ່ບໍ່ໄດ້
ອີກ”

[34]ທັງຫມົດເຫລົ່ານີ້ເປັນກົດບັນຍັດທີ່ພຣະຜູ້ເປັນເຈົ້າໄດ້ສັ່ງໄວ້ກັບໂມເຊສຳລັບຄົນອິສຣາ-
ເອນເທິງພູເຂົາຊີນາຍ.

* * *

# ຈົດເຊັນບັນຊີ

## ບົດທີ 1

### ການນັບບັນດາຜູ້ຊາຍທີ່ສາມາດເຂົ້າສົງຄາມໄດ້

1ວັນທີໜຶ່ງ ເດືອນທີສອງປີທີສອງຕັ້ງແຕ່ພວກເຂົາອອກຈາກປະເທດ ເອຢິບ ພຣະຜູ້ເປັນເຈົ້າ
ກ່າວກັບ ໂມເຊ ໃນຫໍເຕັນສັກສິດ[ກ] ແຫ່ງຊຸມນຸມໃນຖິ່ນ ແຫ້ງແລ້ງ ຊີນາຍ ວ່າ 2ເຈົ້າຈົ່ງຈົດສໍາມະ
ໂນຄົວຊຸມນຸມຊົນ ອິສຣາເອນ ທັງໝົດ ຕາມຕະກູນ ຕາມຄອບຄົວ ຕາມຈໍານວນລາຍຊື່ຜູ້ຊາຍ
ໂດຍລຽງຕາມຕົວທຸກຄົນ 3ເຈົ້າກັບ ອາໂຣນ ຈົ່ງນັບທຸກຄົນໃນ ອິສຣາເອນ ຊຶ່ງອອກຮົບໄດ້ຕັ້ງແຕ່
ອາຍຸຊາວປີຂຶ້ນໄປໄວ້ເປັນກອງທັບ 4ແລະຈົ່ງເອົາຜູ້ໜຶ່ງຈາກທຸກໆຕະກູນທີ່ເປັນຫົວໜ້າໃນຍາດ-
ຕິພີ່ນ້ອງຕາມບັນພະບູລຸດຂອງພວກເຂົາ ໃຫ້ປະຈໍາການກັບທ່ານທັງສອງ.

5ແລະບັນດາຜູ້ທີ່ຈະປະຈໍາການກັບທ່ານທັງສອງມີຊື່ດັ່ງນີ້

| | |
|---|---|
| ເອລີຊູ ລູກຊາຍ ເຊເດອູ | ຈາກຕະກູນ ຣູເບັນ |
| 6 ເຊລູມີເອນ ລູກຊາຍ ຊູຣີຊັດດາຍ | ຈາກຕະກູນ ຊີເມໂອນ |
| 7 ນາໂຊນ ລູກຊາຍ ອຳມີນາດາບ | ຈາກຕະກູນ ຢູດາ |
| 8 ເນທາເນນ ລູກຊາຍ ຊູອາ | ຈາກຕະກູນ ອິດຊາຄາ |
| 9 ເອລີອາບ ລູກຊາຍ ເຮໂລນ | ຈາກຕະກູນ ເຊບູລູນ |
| 10ຈາກລູກຫລານຂອງ ໂຢເຊັບ ມີ | |
| ເອລີຊາມາ ລູກຊາຍ ອຳມີຮຸດ | ຈາກຕະກູນ ເອຟຣາຢິມ ແລະ |
| ຄາມາລີເອັນ ລູກຊາຍ ເປດາຊູ | ຈາກຕະກູນ ມານາເຊ |
| 11 ອາບີດານ ລູກຊາຍ ກີເດໂອນີ | ຈາກຕະກູນ ເບັນຢາມິນ |
| 12 ອາຮີເອເຊ ລູກຊາຍ ອຳມີຊັດດາຍ | ຈາກຕະກູນ ດານ |
| 13 ປາກີເອນ ລູກຊາຍ ອົກຣັນ | ຈາກຕະກູນ ອາເຊ |
| 14 ເອລີຢາສັບ ລູກຊາຍ ດູເອນ | ຈາກຕະກູນ ຄາດ |
| 15 ອາຮີຣາ ລູກຊາຍ ເອນັນ | ຈາກຕະກູນ ນັບທາລີ” |

16ຄົນ ເຫລົ່ານີ້ ເປັນ ຄົນທີ່ ຊຸມນຸມຊົນ ເລືອກ ໃຫ້ ເປັນ ປະມຸກ ແຫ່ງ ຕະກູນ ຂອງ ບັນພະບູລຸດ ຂອງ
ພວກເຂົາ ເປັນຫົວໜ້າຄົນ ອິສຣາເອນ ທີ່ນັບເປັນພັນໆ

17ໂມເຊ ແລະ ອາໂຣນ ໄດ້ນໍາຄົນ ເຫລົ່ານີ້ທີ່ລະບຸຊື່ມາແລ້ວ 18ແລະໃນວັນທີໜຶ່ງ ເດືອນທີສອງ
ຄົນເຫລົ່ານີ້ກໍເອີ້ນປະຊຸມຊົນທັງໝົດ ເຂົ້າມາຂຶ້ນທະບຽນຕາມຄອບຄົວ ຕາມບັນພະບູລຸດຂອງ
ພວກເຂົາ ຕາມຈໍານວນລາຍຊື່ ຕາມລໍາດັບຄົນທັງປວງທີ່ມີອາຍຸຕັ້ງແຕ່ຊາວປີຂຶ້ນໄປ 19ຕາມທີ່
ພຣະຜູ້ເປັນເຈົ້າກ່າວສັ່ງ ໂມເຊ ໄວ້ ທ່ານຈຶ່ງນັບຄົນໃນຖິ່ນແຫ້ງແລ້ງກັນດານ ຊີນາຍ ດັ່ງນີ້

20ຄົນ ຣູເບັນ ບຸດຫົວປີຂອງ ອິສຣາເອນ ໂດຍພົງພັນຂອງພວກເຂົາ ຕາມຄອບຄົວ ຕາມບັນ-

[ກ]ເບິ່ງ ອພຍ. 33:7

ພະບູລຸດຂອງພວກເຂົາ ຕາມຈຳນວນລາຍຊື່ຜູ້ຊາຍ ຕາມລຳດັບ ລຽງຕົວທຸກຄົນທີ່ມີອາຍຸຕັ້ງແຕ່
ຊາວປີຂຶ້ນໄປທີ່ອອກຮົບໄດ້ທັງໝົດ

21ຈຳນວນຄົນໃນຕະກູນຣູເບັນ ເປັນສີ່ໝື່ນຫົກພັນຫ້າຮ້ອຍຄົນ

22ຄົນຊີເມໂອນ ໂດຍເຊື້ອສາຍຂອງພວກເຂົາ ຕາມຄອບຄົວ ຕາມບັນພະບູລຸດຂອງພວກ
ເຂົາ ທຸກຄົນທີ່ເຂົາເຈົ້ານັບຕາມຈຳນວນລາຍຊື່ຜູ້ຊາຍລຽງຕົວທຸກຄົນ ທີ່ມີອາຍຸຕັ້ງແຕ່ຊາວປີຂຶ້ນ
ໄປ ທີ່ອອກຮົບໄດ້ທັງໝົດ 23ຈຳນວນຄົນໃນຕະກູນຊີເມໂອນ ເປັນຫ້າໝື່ນເກົ້າພັນສາມຮ້ອຍຄົນ

24ຄົນ ຄາດ ໂດຍພົງພັນຂອງຕົນ ຕາມຄອບຄົວ ຕາມບັນພະບູລຸດຂອງພວກເຂົາ ຕາມຈຳ-
ນວນລາຍຊື່ຜູ້ທີ່ມີອາຍຸຕັ້ງແຕ່ຊາວປີຂຶ້ນໄປທີ່ອອກຮົບໄດ້ທັງໝົດ 25ຈຳນວນຄົນໃນຕະກູນ ຄາດ
ເປັນສີ່ໝື່ນຫ້າພັນຫົກຮ້ອຍຫ້າສິບຄົນ

26ຄົນຢູດາ ໂດຍພົງພັນຂອງຕົນ ຕາມຄອບຄົວ ຕາມບັນພະບູລຸດຂອງພວກເຂົາ ຕາມຈຳ-
ນວນລາຍຊື່ຄົນທີ່ມີອາຍຸຕັ້ງແຕ່ຊາວປີຂຶ້ນໄປ ທີ່ອອກຮົບໄດ້ທັງໝົດ 27ຈຳນວນຄົນໃນຕະກູນຢູ-
ດາ ເປັນເຈັດໝື່ນສີ່ພັນຫົກຮ້ອຍຄົນ

28ຄົນອິດຊາຄາ ໂດຍພົງພັນຂອງຕົນ ຕາມຄອບຄົວ ຕາມບັນພະບູລຸດຂອງພວກເຂົາ ຕາມ
ຈຳນວນລາຍຊື່ຄົນທີ່ມີອາຍຸຕັ້ງແຕ່ຊາວປີຂຶ້ນໄປ ທີ່ອອກຮົບໄດ້ທັງໝົດ 29ຈຳນວນຄົນໃນຕະກູນ
ອິດຊາຄາ ເປັນຫ້າໝື່ນສີ່ພັນສີ່ຮ້ອຍຄົນ

30ຄົນ ເຊບູລູນ ໂດຍພົງພັນຂອງຕົນ ຕາມຄອບຄົວ ຕາມບັນພະບູລຸດຂອງພວກເຂົາ ຕາມ
ຈຳນວນລາຍຊື່ຄົນທີ່ມີອາຍຸຕັ້ງແຕ່ຊາວປີຂຶ້ນໄປ ທີ່ອອກຮົບໄດ້ທັງໝົດ 31ຈຳນວນຄົນໃນຕະກູນ
ເຊບູລູນ ເປັນຫ້າໝື່ນເຈັດພັນສີ່ຮ້ອຍຄົນ

32ຈາກລູກຫລານຂອງ ໂຢເຊັບ ຄືຄົນ ເອຟຣາຢິມ ໂດຍພົງພັນຂອງຕົນ ຕາມຄອບຄົວ ຕາມ
ບັນພະບູລຸດຂອງພວກເຂົາ ຕາມຈຳນວນລາຍຊື່ຄົນທີ່ມີອາຍຸ ຕັ້ງແຕ່ຊາວປີຂຶ້ນໄປ ທີ່ອອກຮົບ
ໄດ້ທັງໝົດ 33ຈຳນວນຄົນຕະກູນ ເອຟຣາຢິມ ເປັນສີ່ໝື່ນຫ້າຮ້ອຍຄົນ 34ຄົນ ມານາເຊ ໂດຍພົງ-
ພັນຂອງຕົນ ຕາມຄອບຄົວ ຕາມບັນພະບູລຸດຂອງພວກເຂົາ ຕາມຈຳນວນລາຍຊື່ຄົນທີ່ມີອາຍຸ
ຕັ້ງແຕ່ຊາວປີຂຶ້ນໄປ ທີ່ອອກຮົບໄດ້ທັງໝົດ 35ຈຳນວນຄົນໃນຕະກູນ ມານາເຊ ເປັນສາມໝື່ນ
ສອງພັນສອງຮ້ອຍຄົນ

36ຄົນ ເບັນຢາມິນ ໂດຍພົງພັນຂອງຕົນ ຕາມຄອບຄົວ ຕາມບັນພະບູລຸດຂອງພວກເຂົາ
ຕາມຈຳນວນລາຍຊື່ຄົນທີ່ມີອາຍຸຕັ້ງແຕ່ຊາວປີຂຶ້ນໄປ ທີ່ອອກຮົບໄດ້ທັງໝົດ 37ຈຳນວນຄົນໃນ
ຕະກູນ ເບັນຢາມິນ ເປັນສາມໝື່ນຫ້າພັນສີ່ຮ້ອຍຄົນ

38ຄົນດານ ໂດຍພົງພັນຂອງຕົນ ຕາມຄອບຄົວ ຕາມບັນພະບູລຸດຂອງພວກເຂົາ ຕາມຈຳ-
ນວນລາຍຊື່ຄົນທີ່ມີອາຍຸຕັ້ງແຕ່ຊາວປີຂຶ້ນໄປ ທີ່ອອກຮົບໄດ້ທັງໝົດ 39ຈຳນວນຄົນໃນຕະກູນ
ດານ ເປັນຫົກໝື່ນສອງພັນເຈັດຮ້ອຍຄົນ

40ຄົນອາເຊ ໂດຍພົງພັນຂອງຕົນ ຕາມຄອບຄົວ ຕາມບັນພະບູລຸດຂອງພວກເຂົາ ຕາມຈຳ-
ນວນລາຍຊື່ຄົນທີ່ມີອາຍຸຕັ້ງແຕ່ຊາວປີຂຶ້ນໄປ ທີ່ອອກຮົບໄດ້ທັງໝົດ 41ຈຳນວນຄົນໃນຕະກູນ
ອາເຊ ເປັນສີ່ໝື່ນໜຶ່ງພັນຫ້າຮ້ອຍຄົນ

42ລູກຫລານ ນັບທາລີ ໂດຍພົງພັນຂອງຕົນ ຕາມຄອບຄົວ ຕາມບັນພະບູລຸດຂອງພວກເຂົາ
ຕາມຈຳນວນລາຍຊື່ຄົນທີ່ມີອາຍຸຕັ້ງແຕ່ຊາວປີຂຶ້ນໄປ ທີ່ອອກຮົບໄດ້ທັງໝົດ 43ຈຳນວນຄົນໃນ
ຕະກູນ ນັບທາລີ ເປັນຫ້າໝື່ນສາມພັນສີ່ຮ້ອຍຄົນ

44ຈຳນວນຄົນເຫລົ່ານີ້ເປັນຄົນທີ່ ໂມເຊ ກັບ ອາໂຣນ ແລະປະມຸກທັງສິບສອງ ຄົນຂອງຄົນ ອິ-
ສຣາເອນ ຊຶ່ງເປັນຕົວແທນສຳລັບບັນພະບູລຸດຂອງຕົນໄດ້ນັບຈົດໄວ້ໃນບັນຊີ 45ສະນັ້ນ ຈຳນວນ
ຄົນ ອິສຣາເອນ ທັງໝົດທີ່ນັບຕາມບັນພະບູລຸດຂອງພວກເຂົາ ຕາມຈຳນວນຄົນທີ່ມີອາຍຸຕັ້ງແຕ່
ຊາວປີຂຶ້ນໄປທຸກຄົນ ໃນ ອິສຣາເອນ ຊຶ່ງອອກຮົບໄດ້ 46ຈຳນວນຄົນທັງໝົດທີ່ນັບນັ້ນ ເປັນຫົກ
ແສນສາມພັນຫ້າຮ້ອຍຫ້າສິບຄົນ

47ແຕ່ບໍ່ໄດ້ນັບຄົນ ເລວີ ຕາມຕະກູນບັນພະບູລຸດຂອງຕົນລວມດ້ວຍ 48ເພາະ ພຣະຜູ້ເປັນເຈົ້າ
ກ່າວກັບ ໂມເຊ ວ່າຄົນ ເລວີ ບໍ່ຕ້ອງເຂົ້າສົງຄາມ 49“ສະເພາະຕະກູນ ເລວີ ເຈົ້າຢ່ານັບ ແລະຢ່າເຮັດ
ສຳມະໂນຄົວໄວ້ໃນຄົນ ອິສຣາເອນ 50ແຕ່ເຈົ້າຈົ່ງຕັ້ງຄົນ ເລວີ ໄວ້ສຳລັບຫໍເຕັນສັກສິດ ສຳລັບ
ບັນດາ ເຄື່ອງໃຊ້ກັບທຸກສິ່ງທີ່ກ່ຽວຂ້ອງກັບຫໍເຕັນ ສັກສິດ ໃຫ້ພວກ ເຂົາຂົນຫໍເຕັນ ແລະບັນດາ
ເຄື່ອງໃຊ້ ກັບປະຕິບັດງານໃນຫໍເຕັນນັ້ນ ແລະ ຕັ້ງເຕັນຢູ່ຮອບຫໍເຕັນ 51ເມື່ອຈະຍົກຫໍເຕັນສັກ-
ສິດໄປ ຄົນ ເລວີ ຈະຕ້ອງຮື້ຫໍເຕັນສັກສິດ ແລະເມື່ອຈະຕັ້ງຫໍເຕັນສັກສິດຂຶ້ນ ກໍໃຫ້ຄົນ ເລວີ ເປັນຜູ້
ຈັດຕັ້ງ ຜູ້ອື່ນທີ່ເຂົ້າມາໃກ້ຫໍເຕັນສັກສິດຜູ້ນັ້ນຕ້ອງຖືກໂທດເຖິງຕາຍ

52ໃຫ້ຄົນ ອິສຣາເອນ ຕັ້ງ ເຕັນຕາມທີ່ອາໃສຂອງຕົນ ແຕ່ລະພວກ ແລະ ແຕ່ລະຄົນຕາມຄ້າຍ
ຂອງຕົນ ແລະແຕ່ລະຄົນຕາມທຸງຕະກູນຂອງຕົນ 53ແຕ່ໃຫ້ຄົນ ເລວີ ຕັ້ງ ເຕັນຮອບຫໍເຕັນສັກສິດ
ເພື່ອບໍ່ໃຫ້ພຣະພິໂລດ ເກີດຂຶ້ນ ເໜືອຊຸມນຸມຊົນ ອິສຣາເອນ ໃຫ້ຕະກູນ ເລວີ ປະຕິບັດງານຕ່າງໆ
ໃນຫໍເຕັນສັກສິດ”

54ຄົນ ອິສຣາເອນກໍເຮັດດັ່ງນັ້ນ ພວກເຂົາເຮັດຕາມທີ່ ພຣະຜູ້ເປັນເຈົ້າ ຊົງສັ່ງ ໂມເຊ ໄວ້ທຸກປະ-
ການ

# ບົດທີ 2

## ການຈັດຄ້າຍ ແລະຜູ້ນຳໃຫ້ແຕ່ລະຕະກູນ

1ພຣະຜູ້ເປັນເຈົ້າ ກ່າວກັບ ໂມເຊ ແລະ ອາໂຣນ ວ່າ 2“ໃຫ້ລູກຫລານ ອິສຣາເອນ ຕັ້ງຄ້າຍພັກໃກ້
ທຸງຂອງຕົນທຸກຄົນ ຕາມທຸງ ຕາມຄອບຄົວ ຕາມຍາດຕິພີ່ນ້ອງຂອງຕົນ ໃຫ້ຕັ້ງເຕັນຫັນໜ້າເຂົ້າ
ຫາຫໍເຕັນສັກສິດ ແຫ່ງຊຸມນຸມທຸກດ້ານ

3ພວກທີ່ຕັ້ງຄ້າຍທາງທິດຕາເວັນອອກ ໃຫ້ເປັນທຸງຂອງຄ້າຍ ຢູດາ ຕາມກອງທັບຂອງພວກ
ເຂົາ ນາໂຊນ ລູກຊາຍ ອຳມີນາດາບ ຈະ ເປັນນາຍກອງທັບຂອງຄົນ ຢູດາ 4ກອງທັບທີ່ນັບໄວ້ນີ້ມີ
ເຈັດໝື່ນສີ່ພັນຫົກຮ້ອຍຄົນ 5ໃຫ້ຕະກູນ ອິດຊາຄາ ຕັ້ງຄ້າຍລຽງຖັດມາ ເນທາເນນ ລູກຊາຍ ຊູອາ
ຈະ ເປັນນາຍກອງທັບຂອງຄົນ ອິດຊາຄາ 6ພົນໂຍທາທີ່ນັບໄວ້ນີ້ມີຫ້າໝື່ນສີ່ພັນສີ່ຮ້ອຍຄົນ 7ໃຫ້
ຕະກູນ ເຊບູລູນ ລຽງຕໍ່ຈາກ ຢູດາ ໄປ ເອລີອາບ ລູກຊາຍ ເຮໂລນ ຈະ ເປັນນາຍກອງທັບຂອງຄົນ
ເຊບູລູນ 8ພົນໂຍທາທີ່ນັບໄວ້ນີ້ມີຫ້າໝື່ນເຈັດພັນສີ່ຮ້ອຍຄົນ 9ຈຳນວນຄົນທັງໝົດທີ່ນັບເຂົ້າໃນ

ຄ້າຍ ຢູດາ ຕາມກອງທັບຂອງພວກເຂົາແມ່ນໜຶ່ງແສນແປດໝື່ນຫົກພັນ ສີ່ຮ້ອຍຄົນ ເມື່ອອອກ
ຍ່າງ ຄົນເຫລົ່ານີ້ຈະຍົກໄປກ່ອນ
10ໃຫ້ທຸງຄ້າຍຂອງ ຣູເບັນ ຕັ້ງຢູ່ທາງທິດໃຕ້ຕາມກອງທັບຂອງພວກເຂົາ ເອລີຊູ ລູກຊາຍ ເຊ-
ເດອູ ຈະເປັນ ນາຍກອງທັບຂອງຄົນ ຣູເບັນ 11ພົນໂຍທາທີ່ນັບໄດ້ນີ້ມີສີ່ໝື່ນຫົກພັນຫ້າຮ້ອຍຄົນ
12ຕໍ່ມາແມ່ນໃຫ້ຕະກູນຊີເມໂອນຕັ້ງຄ້າຍ ເຊລູມີເອນ ລູກຊາຍ ຊູຣີຊັດດາຍ ຈະເປັນນາຍກອງທັບ
ຂອງຄົນຊີເມໂອນ 13ພົນໂຍທາທີ່ນັບໄວ້ນີ້ມີຫ້າໝື່ນເກົ້າພັນສາມຮ້ອຍຄົນ 14ໃຫ້ຕະກູນ ຄາດ ລຽງ
ຕໍ່ຈາກ ຣູເບັນ ໄປ ເອລີຢາສັບ ລູກຊາຍ ເຣອູເອນ ຈະເປັນນາຍກອງທັບຂອງຄົນ ຄາດ 15ພົນໂຍ-
ທາທີ່ນັບໄວ້ນີ້ມີສີ່ໝື່ນຫ້າພັນຫົກຮ້ອຍຫ້າສິບຄົນ 16ຈຳນວນຄົນທັງໝົດທີ່ນັບເຂົ້າໃນຄ້າຍ ຣູເບັນ
ຕາມ ທັບຂອງພວກເຂົາແມ່ນໜຶ່ງແສນຫ້າໝື່ນໜຶ່ງ ພັນສີ່ຮ້ອຍຫ້າສິບຄົນ ເມື່ອອອກຍ່າງຄົນ
ເຫລົ່ານີ້ຈະເປັນພວກທີ່ສອງ
17ແລ້ວໃຫ້ຍົກ ຫໍເຕັນສັກສິດແຫ່ງຊຸມນຸມຍ່າງຕາມໄປ ໃຫ້ຄ້າຍຄົນ ເລວີ ຢູ່ກາງຂະບວນຄ້າຍ
ພວກເຂົາຕັ້ງຄ້າຍຢູ່ອັນດັບໃດກໍໃຫ້ອອກຍ່າງໄປຕາມອັນດັບນັ້ນ ທຸກຄ້າຍໄປຕາມອັນດັບ ຕາມ
ທຸງຕະກູນຂອງຕົນ
18ໃຫ້ທຸງຄ້າຍຂອງ ເອຟຣາຢິມ ຕັ້ງຢູ່ທາງທິດຕາເວັນຕົກຕາມກອງທັບຂອງພວກເຂົາ ເອລີ-
ຊາມາ ລູກຊາຍ ອຳມີຮຸດ ຈະເປັນນາຍກອງທັບຂອງຄົນ ເອຟຣາຢິມ 19ພົນໂຍທາທີ່ນັບໄວ້ນີ້ມີສີ່
ໝື່ນຫ້າຮ້ອຍຄົນ 20ໃຫ້ຄົນຕະກູນ ມານາເຊ ລຽງຕໍ່ມາ ຄາມາລີເອັນ ລູກຊາຍ ເປດາຊູ ຈະເປັນ
ນາຍກອງທັບ ມານາເຊ 21ພົນໂຍທາທີ່ນັບໄວ້ນີ້ມີສາມໝື່ນສອງພັນສອງຮ້ອຍຄົນ 22ໃຫ້ຕະກູນ
ເບັນຢາມິນ ລຽງຕໍ່ຈາກ ເອຟຣາຢິມ ໄປ ອາບີດານ ລູກຊາຍ ກີເດໂອນີ ຈະເປັນນາຍ ກອງທັບຂອງ
ຄົນ ເບັນຢາມິນ 23ພົນໂຍທາທີ່ນັບໄວ້ນີ້ມີສາມໝື່ນຫ້າພັນສີ່ຮ້ອຍຄົນ 24ຈຳນວນຄົນທັງໝົດທີ່ນັບ
ເຂົ້າໃນຄ້າຍ ເອຟຣາຢິມ ຕາມກອງທັບຂອງພວກເຂົາແມ່ນໜຶ່ງແສນແປດພັນໜຶ່ງຮ້ອຍຄົນ ເມື່ອ
ອອກຍ່າງຄົນເຫລົ່ານີ້ຈະເປັນພວກທີ່ສາມ
25ໃຫ້ທຸງຄ້າຍຂອງ ດານ ຕັ້ງຢູ່ທາງທິດເໜືອຕາມກອງທັບຂອງພວກເຂົາ ອາຮີເອເຊ ລູກຊາຍ
ອຳມີຊັດດາຍ ຈະເປັນນາຍກອງທັບຂອງລູກຫລານ ດານ 26ພົນໂຍທາທີ່ນັບໄວ້ນີ້ມີຫົກໝື່ນສອງ
ພັນເຈັດຮ້ອຍຄົນ 27ໃຫ້ຕະກູນ ອາເຊ ຕັ້ງຄ້າຍລຽງຕໍ່ມາ ປາກີເອນ ລູກຊາຍ ອົກຣັນ ຈະເປັນນາຍ
ກອງທັບຂອງລູກຫລານ ອາເຊ 28ພົນໂຍທາທີ່ນັບໄວ້ນີ້ມີສີ່ໝື່ນໜຶ່ງພັນຫ້າຮ້ອຍຄົນ 29ໃຫ້ຕະກູນ
ນັບທາລີ ລຽງຕໍ່ຈາກດ່ານໄປ ອາຮີຣາ ລູກຊາຍ ເອນັນ ຈະເປັນນາຍກອງທັບຂອງລູກຫລານ ນັບ-
ທາລີ 30ພົນໂຍທາທີ່ນັບໄວ້ນີ້ມີຫ້າໝື່ນສາມພັນສີ່ຮ້ອຍຄົນ 31ຈຳນວນຄົນທັງໝົດທີ່ນັບເຂົ້າໃນ
ຄ້າຍ ດານ ເປັນໜຶ່ງແສນຫ້າໝື່ນເຈັດພັນຫົກຮ້ອຍຄົນ ເມື່ອອອກຍ່າງຄົນເຫລົ່ານີ້ຈະເປັນພວກ
ສຸດທ້າຍ ຍ່າງຕາມທຸງຕະກູນຂອງຕົນ”
32ຄົນເຫລົ່ານີ້ເປັນລູກຫລານ ອິສຣາເອນ ທີ່ນັບຕາມຄອບຄົວຕາມຍາດຕິພີ່ນ້ອງຂອງພວກເຂົາ
ຄົນທັງໝົດທີ່ຢູ່ໃນຄ້າຍພັກນັບຕາມກອງທັບມີຫົກແສນສາມພັນຫ້າຮ້ອຍຫ້າສິບຄົນ 33ແຕ່ບໍ່ໄດ້
ນັບພວກ ເລວີ ລວມເຂົ້າໃນລູກຫລານອິສຣາເອນ ຕາມທີ່ພຣະຜູ້ເປັນເຈົ້າຊົງສັ່ງ ໂມເຊ
34ລູກຫລານ ອິສຣາເອນ ກໍເຮັດດັ່ງນັ້ນ ພວກເຂົາຕັ້ງຄ້າຍຢູ່ຕາມທຸງ ແລະຍົກອອກຍ່າງໄປ

ທຸກຄົນຕາມຄອບຄົວຂອງຕົນ ຕາມບັນພະບູລຸດຂອງຕົນ ຕາມທີ່ພຣະຜູ້ເປັນເຈົ້າຊົງສັ່ງໂມເຊ
ໄວ້ທຸກປະການ

# ບົດທີ 3

## ພວກປະໂລຫິດ ແລະຄົນເລວີຖືກແຍກໄວ້ຕ່າງຫາກ

1ຕໍ່ໄປນີ້ເປັນພົງພັນຂອງອາໂຣນ ແລະ ໂມເຊ ເມື່ອພຣະຜູ້ເປັນເຈົ້າກ່າວກັບໂມເຊເທິງພູເຂົາ
ຊີນາຍ 2ຊື່ລູກຊາຍຂອງອາໂຣນມີດັ່ງນີ້ ນາດາບບຸດຫົວປີ ອາບີຮູ ເອເລອາຊາ ແລະອີທາມາ
3ນີ້ແຫລະ ເປັນຊື່ລູກຊາຍຂອງອາໂຣນທີ່ໄດ້ເຈີມໄວ້ເປັນປະໂລຫິດ ເປັນຜູ້ທີ່ເພິ່ນສະຖາປະນາ
ໄວ້ໃຫ້ປະຕິບັດໃນຕຳແໜ່ງປະໂລຫິດ

4ແຕ່ນາດາບ ແລະອາບີຮູຕາຍຕໍ່ພຣະພັກພຣະຜູ້ເປັນເຈົ້າ ເມື່ອພວກເຂົາເອົາໄຟທີ່ຕ້ອງຫ້າມ
ມາຖວາຍບູຊາຕໍ່ພຣະພັກພຣະຜູ້ເປັນເຈົ້າຢູ່ຖິ່ນແຫ້ງແລ້ງຊີນາຍ ແລະຕ່າງກໍບໍ່ມີບຸດ ດັ່ງນັ້ນ
ເອເລອາຊາ ແລະ ອີທາມາຈຶ່ງໄດ້ປະຕິບັດໃນຕຳແໜ່ງປະໂລຫິດຕໍ່ອາໂຣນ ພໍ່ຂອງພວກເຂົາ

5ພຣະຜູ້ເປັນເຈົ້າກ່າວກັບໂມເຊວ່າ 6"ຈົ່ງນຳເອົາຕະກູນເລວີເຂົ້າມາໃກ້ ແລະຕັ້ງພວກເຂົາ
ໄວ້ຕໍ່ໜ້າອາໂຣນ ໃຫ້ພວກເຂົາບົວລະບັດ ອາໂຣນ 7ພວກເຂົາຈະປະຕິບັດໜ້າທີ່ແທນອາໂຣນ
ແລະແທນຊຸມນຸມຊົນທັງໝົດຕໍ່ໜ້າຫໍເຕັນສັກສິດແຫ່ງຊຸມນຸມໃນຂະນະທີ່ພວກເຂົາປະຕິບັດງານທີ່
ຫໍເຕັນສັກສິດ 8ພວກເຂົາຈະເບິ່ງແຍງບັນດາເຄື່ອງໃຊ້ຂອງຫໍເຕັນສັກສິດແຫ່ງຊຸມນຸມ ແລະປະ-
ຕິບັດໜ້າທີ່ແທນລູກຫລານອິສຣາເອນ ເມື່ອພວກເຂົາເຮັດວຽກໃນຫໍເຕັນສັກສິດ 9ຈົ່ງມອບພວກ
ເລວີໄວ້ກັບອາໂຣນ ແລະພວກລູກຊາຍຂອງອາໂຣນ ພວກເຂົາໄດ້ຮັບເລືອກຈາກລູກຫລານອິ-
ສຣາເອນໃຫ້ມອບໄວ້ກັບອາໂຣນແລ້ວ 10ເຈົ້າຈົ່ງແຕ່ງຕັ້ງອາໂຣນ ແລະພວກລູກຊາຍຂອງອາ-
ໂຣນໃຫ້ປະຕິບັດງານຕາມຕຳແໜ່ງ ປະໂລຫິດ ແຕ່ຄົນອື່ນທີ່ເຂົ້າມາໃກ້ຈະຕ້ອງຖືກລົງໂທດເຖິງ
ຕາຍ"

11ແລະພຣະຜູ້ເປັນເຈົ້າຊົງກ່າວກັບໂມເຊວ່າ 12"ເບິ່ງແມ ເຮົາເອງໄດ້ເລືອກຄົນເລວີຈາກລູກ
ຫລານອິສຣາເອນແທນບັນດາບຸດຫົວປີທ່າມກາງລູກຫລານອິສຣາເອນທີ່ເກີດຈາກມົດລູກຂອງ
ແມ່ ກ່ອນທີ່ຄົນເລວີຈະເປັນຂອງເຮົາ 13ເພາະບັນດາບຸດຫົວປີເປັນຂອງເຮົາ ໃນມື້ທີ່ເຮົາໄດ້ປະ-
ຫານຊີວິດບຸດຫົວປີທັງຫລາຍໃນປະ ເທດເອຢິບນັ້ນ ເຮົາໄດ້ເລືອກບັນດາບຸດຫົວປີໃນອິສຣາ-
ເອນ ທັງມະນຸດ ແລະສັດເດຍລະສານໄວ້ ເປັນຂອງພວກເຂົາ ເຫລົ່ານີ້ຕ້ອງເປັນຂອງເຮົາ ເຮົາ
ຄືພຣະຜູ້ເປັນເຈົ້າ"

14ພຣະຜູ້ເປັນເຈົ້າຊົງກ່າວກັບໂມເຊໃນຖິ່ນແຫ້ງແລ້ງກັນດານຊີນາຍວ່າ 15"ຈົ່ງນັບລູກຫລານ
ເລວີຕາມບັນພະບູລຸດຂອງພວກເຂົາ ແລະຕາມຄອບຄົວ ຄືເຈົ້າຈົ່ງນັບຜູ້ຊາຍທຸກຄົນທີ່ມີອາຍຸ
ຕັ້ງແຕ່ເດືອນໜຶ່ງຂຶ້ນໄປ" 16ໂມເຊຈຶ່ງໄດ້ນັບພວກເຂົາຕາມທີ່ພຣະຜູ້ເປັນເຈົ້າໄດ້ສັ່ງໄວ້

17ຕໍ່ໄປນີ້ເປັນຊື່ລູກຊາຍຂອງເລວີ ຄືເກໂຊນ ໂກຮາດ ແລະເມຣາຣີ

18ຊື່ລູກຊາຍຂອງເກໂຊນຕາມຄອບຄົວ ຄືລິບນີແລະຊີເມອີ 19ລູກຊາຍຂອງໂກຮາດຕາມ
ຄອບຄົວ ຄືອຳຣາມ ອິດຊະຮາ ເຮັບໂຣນ ແລະອຸດຊີເອນ 20ແລະລູກຊາຍຂອງເມຣາຣີຕາມ

ຄອບຄົວ ຄື ມາລີ ແລະ ມູຊີ ນີ້ເປັນຄອບຄົວຄົນ ເລວີ ຕາມ ບັນພະບູລຸດຂອງພວກເຂົາ
21ຕະກູນ ເກໂຊນ ມີຄອບຄົວ ລິບນີ ແລະຄອບຄົວ ຊີເມອີ ເຫລົ່ານີ້ເປັນຄອບຄົວ ເກໂຊນ 22ຈຳ-
ນວນຄົນທັງຫລາຍ ຄືຈຳນວນຜູ້ຊາຍທັງໝົດທີ່ມີອາຍຸຕັ້ງແຕ່ເດືອນໜຶ່ງຂຶ້ນໄປ ແມ່ນເຈັດພັນຫ້າ
ຮ້ອຍຄົນ 23ຄອບຄົວ ເກໂຊນ ນັ້ນຈະຕ້ອງຕັ້ງຄ້າຍຢູ່ທາງຫລັງຫໍເຕັນສັກສິດດ້ານຕາເວັນຕົກ 24ມີ
ເອລີຢາສັບ ລູກຊາຍ ລາເອນ ເປັນຫົວໜ້າຍາດຕິພີ່ນ້ອງຂອງ ເກໂຊນ

## ການຈັດຄ້າຍ ແລະການແບ່ງງານຕ່າງໆ ຂອງຄອບຄົວເລວີ

25ງານທີ່ຕະກູນ ເກໂຊນ ປະຕິບັດໃນຫໍເຕັນສັກສິດ ແຫ່ງຊຸມນຸມມີງານຫໍເຕັນສັກສິດ ງານເຕັນ
ພ້ອມ ກັບເຄື່ອງຄຸມເຕັນ ແລະຜ້າກັ້ງປະຕູຫໍເຕັນສັກສິດແຫ່ງຊຸມນຸມ 26ຜ້າກັ້ງບັງລານ ແລະ
ຜ້າກັ້ງປະຕູລານ ຊຶ່ງຢູ່ຮອບຫໍເຕັນສັກສິດ ແລະແທ່ນບູຊາລວມທັງເຊືອກ ທັງງານສາລະພັດທີ່
ກ່ຽວກັບສິ່ງເຫລົ່ານີ້

27ຕະກູນ ໂກຮາດ ມີຄອບຄົວ ອຳຣາມ ຄອບຄົວ ອິດຊະຮາ ຄອບຄົວ ເຮັບໂຣນ ຄອບຄົວ
ອຸດຊີເອນ ເຫລົ່ານີ້ເປັນຄອບຄົວ ໂກຮາດ 28ຕາມຈຳນວນຜູ້ຊາຍທັງໝົດທີ່ມີອາຍຸຕັ້ງແຕ່ເດືອນ
ໜຶ່ງຂຶ້ນໄປ ແມ່ນແປດພັນຫົກຮ້ອຍຄົນ ເປັນຄົນປະຕິບັດໜ້າທີ່ໃນສະຖານທີ່ບໍລິສຸດ 29ບັນດາ
ຄອບຄົວລູກຫລານຂອງ ໂກຮາດ ຈະຕັ້ງຄ້າຍຢູ່ທາງທິດໃຕ້ຂອງຫໍເຕັນສັກສິດ 30ມີ ເອລີຊາຟັນ
ລູກຊາຍ ອຸດຊີເອນ ເປັນຫົວໜ້າຍາດຕິພີ່ນ້ອງຂອງຄອບຄົວ ໂກຮາດ

31ຄົນເຫລົ່ານີ້ມີໜ້າທີ່ເບິ່ງແຍງຫີບພຣະສັນຍາ ໂຕະ ຄັນຕະກຽງ ແທ່ນບູຊາທັງສອງ ແລະ
ເຄື່ອງໃຊ້ຕ່າງໆຂອງສະຖານທີ່ບໍລິສຸດ ຊຶ່ງປະໂລຫິດໃຊ້ປະຕິບັດງານ ແລະຜ້າກັ້ງ ທັງງານສາ-
ລະພັດທີ່ກ່ຽວກັບສິ່ງເຫລົ່ານີ້ 32ເອເລອາຊາ ລູກຊາຍຂອງ ອາໂຣນ ເປັນນາຍໃຫຍ່ເໜືອຫົວໜ້າ
ຂອງພວກ ເລວີ ແລະ ກວດກາຜູ້ທີ່ມີໜ້າທີ່ປະຕິບັດງານໃນສະຖານທີ່ບໍລິສຸດ

33ຕະກູນ ເມຣາຣີ ມີຄອບຄົວ ມາລີ ແລະຄອບຄົວ ມູຊີ ເຫລົ່ານີ້ເປັນຄອບຄົວ ເມຣາຣີ 34ຈຳ-
ນວນຄົນທັງຫລາຍຄືຈຳນວນຜູ້ຊາຍທັງໝົດທີ່ມີອາຍຸຕັ້ງແຕ່ໜຶ່ງ ເດືອນຂຶ້ນໄປ ແມ່ນຫົກພັນສອງ
ຮ້ອຍຄົນ 35ແລະ ຊູຣິເອນ ລູກຊາຍ ອາບີຮາຍ ເປັນຫົວໜ້າຍາດຕິພີ່ນ້ອງຂອງຄອບຄົວ ເມຣາຣີ
ຄົນເຫລົ່ານີ້ຈະຕັ້ງຄ້າຍຢູ່ທິດເໜືອຂອງຫໍເຕັນສັກສິດ

36ວຽກທີ່ກຳນົດໃຫ້ແກ່ລູກຫລານ ເມຣາຣີ ຄືການເບິ່ງແຍງໄມ້ຂອບຫໍເຕັນສັກສິດ ໄມ້ກອນ ໄມ້
ເສົາ ຖານຮອງ ແລະເຄື່ອງປະກອບສິ່ງເຫລົ່ານີ້ທັງໝົດ ທັງງານສາລະພັດທີ່ກ່ຽວກັບສິ່ງເຫລົ່ານີ້
37ແລະເສົາຮອບລານ ພ້ອມກັບຖານຮອງ ຫລັກໝຸດ ແລະເຊືອກ

38ບຸກຄົນທີ່ຈະຕັ້ງຄ້າຍຢູ່ໜ້າຫໍເຕັນສັກສິດທາງທິດຕາເວັນອອກມີ ໂມເຊ ແລະ ອາໂຣນ ກັບລູກ
ຫລານຂອງລາວ ມີໜ້າທີ່ເບິ່ງແຍງການບົວລະບັດພາຍໃນສະຖານທີ່ບໍລິສຸດ ແລະບັນດາກິດ-
ຈະການທີ່ຫາກໍເຮັດເພື່ອລູກຫລານ ອິສຣາເອນ ແລະຜູ້ອື່ນທີ່ເຂົ້າມາໃກ້ຈະຕ້ອງຖືກລົງໂທດເຖິງ
ຕາຍ 39ບັນດາຄົນທີ່ນັບເຂົ້າໃນຄົນ ເລວີ ຊຶ່ງ ໂມເຊ ແລະ ອາໂຣນ ໄດ້ນັບຕາມພຣະບັນຊາຂອງ
ພຣະຜູ້ເປັນເຈົ້າ ແມ່ນບັນດາຜູ້ຊາຍທັງໝົດຕາມຄອບຄົວທີ່ມີອາຍຸຕັ້ງແຕ່ໜຶ່ງ ເດືອນຂຶ້ນໄປ ເປັນ
ສອງໝື່ນສອງພັນ ຄົນ

## ການໄຖ່ຖອນບຸດຫົວປີ

40ແລະ ພຣະຜູ້ເປັນເຈົ້າ ກ່າວກັບ ໂມເຊ ວ່າ "ຈົ່ງນັບລູກຊາຍຫົວປີທັງຫລາຍຂອງລູກຫລານ ອິ-
ສຣາເອນ ທີ່ມີອາຍຸຕັ້ງແຕ່ໜຶ່ງເດືອນຂຶ້ນໄປ ຈົ່ງຈົດຈຳນວນລາຍຊື່ໄວ້ 41ເຈົ້າຈົ່ງເອົາພວກ ເລວີ
ໄວ້ໃຫ້ເຮົາ (ເຮົາຄື ພຣະຜູ້ເປັນເຈົ້າ) ທັງນີ້ເພື່ອແທນບັນດາບຸດຫົວປີ ທ່າມກາງລູກຫລານ ອິ-
ສຣາເອນ ແລະໃຫ້ສັດທັງປວງຂອງຄົນ ເລວີ ແທນສັດຫົວປີທັງຫລາຍຂອງລູກຫລານ ອິສຣາ-
ເອນ" 42ດັ່ງນັ້ນ ໂມເຊ ຈຶ່ງໄດ້ນັບບັນດາບຸດຫົວປີທ່າມກາງລູກຫລານ ອິສຣາເອນ ຕາມທີ່ ພຣະຜູ້-
ເປັນເຈົ້າ ໄດ້ສັ່ງເພິ່ນໄວ້ 43ລູກຊາຍຫົວປີທັງຫລາຍຕາມຈຳນວນຊື່ທີ່ນັບໄດ້ ຊຶ່ງມີອາຍຸຕັ້ງແຕ່
ໜຶ່ງເດືອນຂຶ້ນໄປມີສອງໝື່ນສອງພັນສອງຮ້ອຍເຈັດສິບສາມຄົນ

44ແລະ ພຣະຜູ້ເປັນເຈົ້າ ກ່າວກັບ ໂມເຊ ວ່າ 45"ຈົ່ງເອົາພວກ ເລວີ ແທນບຸດຫົວປີທັງໝົດຂອງ
ລູກຫລານ ອິສຣາເອນ ແລະເອົາສັດທັງຫລາຍ ຂອງຄົນ ເລວີ ແທນສັດຂອງລູກຫລານ ອິສຣາ-
ເອນ ຄົນ ເລວີ ຈະເປັນຂອງເຮົາ ເຮົາຄື ພຣະຜູ້ເປັນເຈົ້າ 46ສຳລັບເປັນຄ່າໄຖ່ບຸດຫົວປີຂອງລູກ
ຫລານ ອິສຣາເອນ ຈຳນວນສອງຮ້ອຍເຈັດສິບສາມ ຄົນທີ່ເກີນຈຳນວນຜູ້ຊາຍຄົນ ເລວີ ນັ້ນ
47ເຈົ້າຈົ່ງເກັບຄົນລະຫ້າເຊເຂ ຄືຈົ່ງເກັບຕາມເຊເຂຂອງສະຖານທີ່ບໍລິສຸດ (ເຊເຂໜຶ່ງມີຊາວ
ເກຣາ) 48ແລະມອບເງິນ ຊຶ່ງຕ້ອງເສຍເປັນຄ່າໄຖ່ຂອງຄົນທີ່ເກີນເຫລົ່ານັ້ນໃຫ້ໄວ້ແກ່ ອາໂຣນ
ແລະລູກຫລານຂອງລາວ"

49ໂມເຊ ຈຶ່ງເກັບເງິນຄ່າໄຖ່ຈາກຄົນເຫລົ່ານັ້ນທີ່ເກີນກວ່າຈຳນວນຄົນທີ່ຄົນ ເລວີ ໄຖ່ໄວ້ 50ຄື
ລາວເກັບເງິນຈາກບຸດຫົວປີຂອງລູກຫລານ ອິສຣາເອນ ເປັນເງິນຈຳນວນໜຶ່ງພັນສາມຮ້ອຍຫົກ
ສິບຫ້າເຊເຂ ນັບຕາມເຊເຂຂອງສະຖານທີ່ບໍລິສຸດ 51ແລະ ໂມເຊ ໄດ້ນຳເອົາເງິນຄ່າໄຖ່ໃຫ້ແກ່
ອາໂຣນ ແລະລູກຫລານຂອງ ອາໂຣນ ຕາມພຣະບັນຊາຂອງ ພຣະຜູ້ເປັນເຈົ້າ ດັ່ງທີ່ ພຣະຜູ້-
ເປັນເຈົ້າຊົງສັ່ງ ໂມເຊ ໄວ້

# ບົດທີ 4

## ຄົນໂກຮາດຮັບຜິດຊອບຕໍ່ສິ່ງບໍລິສຸດທີ່ສຸດໃນຫໍເຕັນສັກສິດ

1ພຣະຜູ້ເປັນເຈົ້າ ກ່າວກັບ ໂມເຊ ແລະ ອາໂຣນ ວ່າ 2"ຈົ່ງເຮັດສຳມະໂນຄົວລູກຫລານ ໂກຮາດ
ຈາກຄົນ ເລວີ ຕາມຄອບຄົວບັນພະບູລຸດຂອງພໍ່ 3ຈາກຄົນທີ່ມີອາຍຸສາມສິບປີເຖິງຫ້າສິບປີ ທຸກ
ຄົນທີ່ເຂົ້າປະຕິບັດງານໄດ້ ເພື່ອເຮັດວຽກໃນຫໍເຕັນສັກສິດແຫ່ງຊຸມນຸມ 4ຕໍ່ໄປນີ້ແມ່ນວຽກທີ່ລູກ
ຫລານ ໂກຮາດ ຈະ ເຮັດ ໃນຫໍເຕັນສັກສິດ ແຫ່ງຊຸມນຸມ ຄືວຽກທີ່ຕ້ອງປະຕິບັດຕໍ່ສິ່ງບໍລິສຸດທີ່ສຸດ
5ເມື່ອຈະເຄື່ອນຍ້າຍຄ້າຍໄປ ອາໂຣນ ແລະລູກຊາຍຂອງທ່ານຈະເຂົ້າໄປຂ້າງໃນ ແລະປົດຜ້າກັ້ງ
ອອກ ເອົາໄປຄຸມຫີບພຣະສັນຍາໄວ້ 6ແລ້ວເອົາໜັງທາຄັດຄຸມ ແລະເອົາຜ້າສີຟ້າລ້ວນຄຸມເທິງ
ນັ້ນ ແລະສອດຄານຫາມ

7ແລະ ເອົາຜ້າສີຟ້າປູລົງ ເທິງ ໂຕະສຳລັບຂະໜົມປັງໜ້າພຣະພັກ ແລ້ວວາງຈານ ແລະບ່ວງ
ຊາມ ແລະໂຖນ້ຳທີ່ລິນເຄື່ອງດື່ມບູຊາ ແລະຂະໜົມປັງໜ້າພຣະພັກກໍໃຫ້ວາງຢູ່ເທິງຜ້າສີຟ້ານັ້ນ
8ແລ້ວເອົາຜ້າສີແດງຄຸມ ທາງເທິງ ແມ່ນເອົາໜັງທາຄັດຄຸມອີກ ແລ້ວສອດຄານຫາມໃສ່

[9]ແລ້ວໃຫ້ພວກເຂົາເອົາຜ້າສີຟ້າຄຸມຄັນຕະກຽງທີ່ໃຊ້ຈູດ ຄຸມຕະກຽງ ມີດຕັດໄສ້ຕະກຽງ ຖາດ
ໃສ່ມີດຕັດ ແລະບັນດາພາຊະນະໃສ່ນ້ຳມັນໃຕ້ຕະກຽງ [10]ເອົາໜັງທາຄັດຫໍ່ຕະກຽງ ແລະເຄື່ອງ
ປະກອບທັງໝົດ ແລ້ວໃສ່ໄວ້ເທິງຄານຫາມ

[11]ໃຫ້ພວກເຂົາເອົາຜ້າສີຟ້າມາຄຸມແທ່ນທອງຄຳ ເອົາໜັງທາຄັດຄຸມໄວ້ ແລ້ວສອດຄານຫາມ
ໃສ່ [12]ແລະໃຫ້ພວກເຂົາເອົາຜ້າສີຟ້າຫໍ່ພາຊະນະເຄື່ອງໃຊ້ຊຶ່ງໃຊ້ຢູ່ໃນສະຖານທີ່ບໍລິສຸດ ແລະຄຸມ
ດ້ວຍໜັງທາຄັດ ແລະໃສ່ໄວ້ເທິງຄານຫາມ [13]ໃຫ້ເອົາຂີ້ເຖົ່າອອກຈາກແທ່ນບູຊາ ເອົາຜ້າສີມ່ວງ
ຄຸມແທ່ນ [14]ເອົາພາຊະນະປະຈຳແທ່ນທັງໝົດຊຶ່ງເປັນເຄື່ອງໃຊ້ປະຈຳແທ່ນ ມີຖາດຮອງໄຟ ໄມ້
ສຽບຊີ້ນ, ຊ້ວນ, ຊາມ ແລະພາຊະນະປະຈຳແທ່ນທັງໝົດວາງໄວ້ທາງເທິງ ແລ້ວເອົາໜັງທາ
ຄັດຄຸມ ແລະສອດຄານຫາມ

[15]ເມື່ອ ອາໂຣນ ແລະລູກຊາຍຄຸມສະຖານທີ່ບໍລິສຸດ ແລະຄຸມບັນດາເຄື່ອງໃຊ້ຂອງສະຖານບໍລິ-
ສຸດສຳເລັດແລ້ວ ເມື່ອເຖິງເວລາເຄື່ອນຍ້າຍຄ້າຍ ລູກຫລານ ໂກຮາດ ຈຶ່ງຈະເຂົ້າມາຫາມ ແຕ່
ພວກເຂົາຕ້ອງບໍ່ແຕະຕ້ອງຂອງບໍລິສຸດເຫລົ່ານັ້ນ ຢ້ານວ່າພວກເຂົາຈະຕາຍ ສິ່ງເຫລົ່ານີ້ແຫລະ
ທີ່ເປັນຂອງປະຈຳຫໍເຕັນສັກສິດແຫ່ງຊຸມນຸມຊຶ່ງລູກຫລານຂອງ ໂກຮາດ ຈະຕ້ອງຫາມ

[16]ແລ້ວ ເອເລອາຊາ ລູກຊາຍຂອງ ອາໂຣນ ຈະຕ້ອງເບິ່ງແຍງນ້ຳມັນສຳລັບຕະກຽງ ເຄື່ອງຫອມ
ພືດຜົນເປັນເມັດເພື່ອຖວາຍບູຊາ ນ້ຳມັນເຈີມ ແລະເບິ່ງແຍງຫໍເຕັນສັກສິດທັງໝົດກັບບັນດາສິ່ງ
ຂອງໃນຫໍເຕັນສັກສິດນັ້ນ ຄືສະຖານທີ່ບໍລິສຸດ ແລະເຄື່ອງປະກອບດ້ວຍ”

[17]ພຣະຜູ້ເປັນເຈົ້າ ກ່າວກັບ ໂມເຊ ແລະ ອາໂຣນ ວ່າ [18]“ຢ່າຕັດຕະກູນຄອບຄົວຄົນ ໂກຮາດ
ອອກຈາກຄົນ ເລວີ [19]ແຕ່ຈົ່ງປະຕິບັດແກ່ເຂົາເພື່ອຈະໃຫ້ມີຊີວິດ ແລະບໍ່ຕາຍ ເມື່ອພວກເຂົາເຂົ້າ
ມາໃກ້ຂອງບໍລິສຸດທີ່ສຸດເຫລົ່ານັ້ນ ຄື ອາໂຣນ ແລະບັນດາລູກຊາຍຂອງ ອາໂຣນ ຈະເຂົ້າໄປຕັ້ງ
ພວກເຂົາໄວ້ຕາມວຽກ ແລະພາລະຂອງພວກເຂົາທຸກຄົນ [20]ແຕ່ຢ່າໃຫ້ຄົນ ໂກຮາດ ເຂົ້າໄປເບິ່ງ
ຂອງບໍລິສຸດແມ່ນແຕ່ອຶດໃຈດຽວ ຢ້ານວ່າພວກເຂົາຈະຕ້ອງຕາຍ”

## ໜ້າທີ່ຕ່າງໆ ຂອງຄົນເກໂຊນ

[21]ພຣະຜູ້ເປັນເຈົ້າ ກ່າວກັບ ໂມເຊ ວ່າ [22]“ຈົ່ງເຮັດສຳມະໂນຄົວລູກຫລານ ເກໂຊນ ຕາມບັນ-
ພະບູລຸດ ຕາມຄອບຄົວຂອງພວກເຂົາດ້ວຍ [23]ເຈົ້າຈົ່ງນັບຄົນທີ່ມີອາຍຸຕັ້ງແຕ່ສາມສິບປີຫາຫ້າ
ສິບປີ ທຸກຄົນທີ່ເຂົ້າເຮັດວຽກໄດ້ ເພື່ອເຮັດວຽກໃນຫໍເຕັນສັກສິດແຫ່ງຊຸມນຸມ [24]ຕໍ່ໄປນີ້ເປັນການ
ງານຂອງຄອບຄົວ ເກໂຊນ ຄືງານບົວລະບັດ ແລະງານແບກພາລະ [25]ໃຫ້ພວກເຂົາຂົນຜ້າກັ້ງ
ຫໍເຕັນສັກສິດ ແລະຂົນຫໍເຕັນສັກສິດແຫ່ງຊຸມນຸມພ້ອມກັບຜ້າຄຸມ ແລະໜັງທາຄັດທີ່ຄຸມຢູ່ຂ້າງ
ເທິງ ແລະຜ້າກັ້ງສຳລັບບັງປະຕູຫໍເຕັນສັກສິດແຫ່ງຊຸມນຸມ [26]ແລະກັ້ງບັງລານ ແລະຜ້າກັ້ງທາງ
ເຂົ້າປະຕູລານຊຶ່ງຢູ່ຮອບຫໍເຕັນສັກສິດ ແລະແທ່ນບູຊາ ແລະເຊືອກ ແລະເຄື່ອງໃຊ້ສອຍທັງໝົດ
ພວກເຂົາຈະຕ້ອງເຮັດວຽກທີ່ຄວນເຮັດທຸກຢ່າງກ່ຽວກັບສິ່ງເຫລົ່ານີ້

[27]ໃຫ້ອາໂຣນ ແລະບັນດາລູກຊາຍຂອງ ອາໂຣນ ບັງຄັບບັນຊາລູກຊາຍທັງຫລາຍຂອງ ເກໂຊນ
ເລື່ອງທຸກສິ່ງທີ່ພວກເຂົາຈະຕ້ອງຂົນ ແລະງານທຸກຢ່າງທີ່ພວກເຂົາຈະຕ້ອງເຮັດ ແລະເຈົ້າຈະ
ຕ້ອງກຳນົດທຸກສິ່ງທີ່ພວກເຂົາຈະຕ້ອງຂົນ [28]ນີ້ເປັນວຽກຂອງຄອບຄົວຄົນ ເກໂຊນ ໃນຫໍເຕັນສັກ-

ສິດແຫ່ງຊຸມນຸມ ແລະອີທາມາລູກຊາຍຂອງອາໂຣນຈະເບິ່ງແຍງວຽກຂອງຄົນເຫລົ່ານັ້ນ

## ໜ້າທີ່ຕ່າງໆຂອງຄົນເມຣາຣີ

29ຝ່າຍລູກຊາຍຄົນ ເມຣາຣີ ນັ້ນ ເຈົ້າຈົ່ງນັບພວກເຂົາຕາມຄອບຄົວຕາມບັນພະບູລຸດຂອງ
ພວກເຂົາ 30ເຈົ້າຈົ່ງນັບຄົນທີ່ມີອາຍຸສາມສິບປີຂຶ້ນໄປຫາຫ້າສິບປີ ທຸກຄົນທີ່ເຂົ້າເຮັດວຽກໄດ້ເພື່ອ
ເຮັດວຽກໃນຫໍເຕັນສັກສິດແຫ່ງຊຸມນຸມ 31ແລະຕໍ່ໄປນີ້ເປັນສິ່ງທີ່ກຳນົດໃຫ້ພວກເຂົາຂົນ ງານທັງ
ໝົດຂອງພວກເຂົາໃນການບົວລະບັດຫໍເຕັນສັກສິດແຫ່ງຊຸມນຸມ ຄືໄມ້ຂອບຫໍເຕັນສັກສິດ ໄມ້
ກອນ ໄມ້ເສົາ ແລະຖານຮອງ 32ເສົາຮອບລານພ້ອມກັບຖານຮອງ ຫລັກໝຸດ ແລະເຊືອກ
ເຄື່ອງໃຊ້ ແລະເຄື່ອງປະກອບສິ່ງເຫລົ່ານີ້ທັງໝົດເຈົ້າຈົ່ງກຳນົດຊື່ສິ່ງຂອງທີ່ພວກເຂົາຕ້ອງຫາມ
33ຕໍ່ໄປນີ້ເປັນວຽກຂອງຄອບຄົວຄົນ ເມຣາຣີ ເປັນວຽກທັງໝົດຂອງພວກເຂົາໃນການບົວລະບັດ
ຫໍເຕັນສັກສິດແຫ່ງຊຸມນຸມ ໂດຍການບັງຄັບບັນຊາຂອງອີທາມາລູກຊາຍຂອງອາໂຣນ"

## ການສຳຫລວດສຳມະໂນຄົວຂອງຄົນໂກຮາດ ຄົນເກໂຊນ ແລະຄົນເມຣາຣີ

34ໂມເຊ ແລະ ອາໂຣນ ແລະບັນດາຫົວໜ້າຂອງຊຸມນຸມຊົນໄດ້ນັບຄົນ ໂກຮາດ ຕາມຄອບຄົວ
ບັນພະບູລຸດຂອງພໍ່ 35ທຸກຄົນທີ່ມີອາຍຸຕັ້ງແຕ່ສາມສິບປີຂຶ້ນໄປຫາຫ້າສິບປີທີ່ເຂົ້າເຮັດວຽກໄດ້
ເພື່ອເຮັດວຽກໃນຫໍເຕັນສັກສິດແຫ່ງຊຸມນຸມ 36ແລະຈຳນວນຄົນຕາມຄອບຄົວຂອງພວກເຂົາແມ່ນ
ສອງພັນເຈັດຮ້ອຍຫ້າສິບຄົນ 37ນີ້ແຫລະ ແມ່ນຈຳນວນຄົນໃນຄອບຄົວຂອງ ໂກຮາດ ບັນດາຜູ້
ທີ່ເຮັດວຽກໃນຫໍເຕັນສັກສິດແຫ່ງຊຸມນຸມ ຊຶ່ງ ໂມເຊ ແລະ ອາໂຣນ ໄດ້ນັບໄວ້ຕາມທີ່ ພຣະຜູ້ເປັນ-
ເຈົ້າຊົງສັ່ງ ໂມເຊ

38ຈຳນວນຄົນໃນລູກຫລານ ເກໂຊນ ຕາມຄອບຄົວຕາມບັນພະບູລຸດຂອງພວກເຂົາ 39ທຸກຄົນ
ທີ່ມີອາຍຸຕັ້ງແຕ່ສາມສິບປີຂຶ້ນໄປຫາຫ້າສິບປີທີ່ເຂົ້າເຮັດວຽກໄດ້ ເພື່ອເຮັດວຽກໃນຫໍເຕັນສັກສິດ
ແຫ່ງຊຸມນຸມ 40ຈຳນວນຄົນຕາມຄອບຄົວຕາມຍາດຕິພີ່ນ້ອງ ຕາມບັນພະບູລຸດຂອງພວກເຂົາ
ແມ່ນສອງພັນຫົກຮ້ອຍສາມສິບຄົນ 41ນີ້ເປັນຈຳນວນຄົນໃນຄອບຄົວຄົນ ເກໂຊນ ບັນດາຜູ້ເຮັດ
ວຽກໃນຫໍເຕັນສັກສິດແຫ່ງຊຸມນຸມ ຊຶ່ງ ໂມເຊ ແລະ ອາໂຣນ ໄດ້ນັບໄວ້ຕາມພຣະຄຳສັ່ງຂອງ ພຣະ-
ຜູ້ເປັນເຈົ້າ

42ຈຳນວນຄົນໃນຄອບຄົວຄົນ ເມຣາຣີ ຕາມຄອບຄົວຕາມຍາດຕິພີ່ນ້ອງ ຕາມບັນພະບູລຸດ
ຂອງພວກເຂົາ 43ທຸກຄົນທີ່ມີອາຍຸຕັ້ງແຕ່ສາມສິບປີຂຶ້ນໄປຫາຫ້າສິບປີທີ່ເຂົ້າເຮັດວຽກໄດ້ ເພື່ອ
ເຮັດວຽກໃນຫໍເຕັນສັກສິດແຫ່ງຊຸມນຸມ 44ຈຳນວນຄົນຕາມຄອບຄົວຂອງພວກເຂົາແມ່ນສາມພັນ
ສອງຮ້ອຍຄົນ 45ນີ້ແຫລະ ແມ່ນຈຳນວນຄົນທີ່ນັບໄດ້ໃນຄອບຄົວຄົນ ເມຣາຣີ ຊຶ່ງ ໂມເຊ ແລະ
ອາໂຣນ ໄດ້ນັບໄວ້ຕາມທີ່ ພຣະຜູ້ເປັນເຈົ້າຊົງສັ່ງ ໂມເຊ

46ບັນດາຄົນ ເລວີ ທີ່ນັບໄດ້ ຜູ້ທີ່ ໂມເຊ ແລະ ອາໂຣນ ແລະບັນດາຫົວໜ້າຂອງຄົນ ອິສຣາເອນ
ໄດ້ນັບ ໄວ້ຕາມຄອບຄົວ ຕາມຍາດຕິພີ່ນ້ອງ ຕາມບັນພະບູລຸດຂອງພວກເຂົາ 47ທຸກຄົນທີ່ມີອາ-
ຍຸຕັ້ງແຕ່ສາມສິບປີຫາຫ້າສິບປີທີ່ເຂົ້າເຮັດວຽກ ແລະເຮັດວຽກຂົນພາລະ ໄດ້ໃນຫໍເຕັນສັກສິດ
ແຫ່ງຊຸມນຸມ 48ຈຳນວນຄົນທີ່ນັບໄດ້ນັ້ນ ແມ່ນແປດພັນຫ້າຮ້ອຍແປດສິບຄົນ 49ພວກເຂົາໄດ້ຖືກ
ນັບຕາມທີ່ ພຣະຜູ້ເປັນເຈົ້າ ຊົງສັ່ງທາງ ໂມເຊ ໃຫ້ທຸກຄົນເຮັດວຽກບົວລະບັດ ຫລືງານຂົນຂອງ

ພວກເຂົາ ດັ່ງນີ້ແຫລະ ໂມເຊໄດ້ນັບພວກເຂົາໄວ້ຕາມທີ່ພຣະຜູ້ເປັນເຈົ້າໄດ້ຊົງສັ່ງເພິ່ນໄວ້

# ບົດທີ 5

## ຄົນພະຍາດຂີ້ທູດຕ້ອງໄປນອກຄ້າຍ

1ພຣະຜູ້ເປັນເຈົ້າກ່າວກັບໂມເຊວ່າ 2“ຈົ່ງບອກລູກຫລານອິສຣາເອນໃຫ້ສັ່ງບັນດາຄົນທີ່ເປັນ
ພະຍາດຂີ້ທູດ ແລະທຸກຄົນທີ່ມີສິ່ງໄຫລອອກ ແລະທຸກຄົນທີ່ມີມົນທິນ ເພາະການຖືກຊາກສົບ
ໃຫ້ໄປນອກຄ້າຍ 3ເຈົ້າຈົ່ງສັ່ງທັງຜູ້ຊາຍ ແລະຜູ້ຍິງໃຫ້ໄປນອກຄ້າຍ ເພື່ອບໍ່ໃຫ້ພວກເຂົາເຮັດໃຫ້
ຄ້າຍຂອງຕົນ ຊຶ່ງເຮົາສະຖິດຢູ່ທ່າມກາງນັ້ນເປັນມົນທິນ” 4ແລະລູກຫລານອິສຣາເອນກໍເຮັດ
ຕາມ ແລະສັ່ງຄົນເຫລົ່ານັ້ນໃຫ້ໄປນອກຄ້າຍ ພຣະຜູ້ເປັນເຈົ້າໄດ້ສັ່ງໂມເຊໄວ້ປະການໃດ ລູກ
ຫລານອິສຣາເອນກໍເຮັດຕາມນັ້ນ

5ພຣະຜູ້ເປັນເຈົ້າກ່າວກັບໂມເຊວ່າ 6“ຈົ່ງກ່າວແກ່ລູກຫລານອິສຣາເອນວ່າ ຜູ້ຊາຍກໍດີ ຫລື
ຜູ້ຍິງກໍດີ ເຮັດບາບທີ່ມະນຸດເຮັດ ຄືປະພຶດການລະເມີດຕໍ່ພຣະຜູ້ເປັນເຈົ້າ ແລະຜູ້ນັ້ນມີຄວາມ
ຜິດ 7ກໍໃຫ້ຜູ້ນັ້ນສາລະພາບຄວາມຜິດທີ່ຕົນໄດ້ເຮັດ ແລະໃຫ້ລາວຄືນສິ່ງທີ່ລະເມີດ ຊຶ່ງລາວໄດ້
ມານັ້ນ ເຕັມຄືເກົ່າ ທັງເພີ່ມອີກໜຶ່ງໃນຫ້າສ່ວນໃຫ້ແກ່ເຈົ້າຂອງ ຜູ້ທີ່ລາວໄດ້ເຮັດການລະເມີດຕໍ່
ນັ້ນ 8ຖ້າຄົນນັ້ນບໍ່ມີພີ່ນ້ອງທີ່ຈະຮັບຂອງຄືນກໍໃຫ້ຖວາຍຂອງທີ່ຄືນນັ້ນແກ່ພຣະຜູ້ເປັນເຈົ້າທາງ
ປະໂລຫິດ ລວມທັງແກະຜູ້ສຳລັບບູຊາລຶບລ້າງມົນທິນບາບ ຊຶ່ງລາວຕ້ອງບູຊາລຶບລ້າງບາບຂອງ
ຕົນ 9ແລະຂອງບໍລິສຸດທີ່ລູກຫລານອິສຣາເອນນຳມາຖວາຍ ທຸກສິ່ງທີ່ນຳມາໃຫ້ແກ່ປະໂລຫິດ
ກໍຕົກເປັນຂອງປະໂລຫິດ 10ສິ່ງບໍລິສຸດຂອງທຸກຄົນໃຫ້ຕົກເປັນຂອງປະໂລຫິດ ແລະທຸກສິ່ງທີ່
ເຂົານຳໄປຖວາຍປະໂລຫິດ ກໍຕ້ອງຕົກເປັນຂອງປະໂລຫິດ”

11ແລະພຣະຜູ້ເປັນເຈົ້າກ່າວກັບໂມເຊວ່າ

## ການທົດສອບຜູ້ຍິງທີ່ອາດຫລິ້ນຊູ້

12“ຈົ່ງກ່າວແກ່ລູກຫລານອິສຣາເອນວ່າ ຖ້າເມຍຂອງຜູ້ຊາຍຄົນໃດຫລົງປະພຶດນອກໃຈຜົວ
13ຄືມີຊາຍອື່ນມານອນຮ່ວມກັບນາງໂດຍພົ້ນຈາກສາຍຕາຜົວ ແມ່ນນາງໄດ້ເຮັດຕົວໃຫ້ເປັນມົນ-
ທິນແລ້ວ ແຕ່ບໍ່ມີໃຜຮູ້ເຫັນ ແລະຍັງບໍ່ມີພະຍານ ເພາະຈັບບໍ່ໄດ້ຄາທີ່ 14ຈິດຫຶງຫວງກໍມາສິງຜົວ
ລາວຈຶ່ງຫຶງຫວງເມຍຂອງລາວ ແລະເມຍໄດ້ເຮັດຕົວໃຫ້ເປັນມົນທິນ ຫລືຈິດຫຶງຫວງມາສິງຜົວ
ລາວຈຶ່ງຫຶງຫວງເມຍຂອງລາວ ເຖິງວ່າເມຍບໍ່ໄດ້ເຮັດຕົວໃຫ້ເປັນມົນທິນກໍຕາມ. 15ກໍໃຫ້ຊາຍຜູ້
ນັ້ນພາເມຍຂອງຕົນໄປຫາປະໂລຫິດ ນຳເຄື່ອງບູຊາສຳລັບເມຍໄປ ມີແປ້ງບາລີໜຶ່ງໃນສິບເອຟາ
ຢ່າໃຫ້ລາວຖອກນ້ຳມັນ ຫລືໃສ່ກຳຍານໃນແປ້ງນັ້ນ ເພາະເປັນເຄື່ອງບູຊາເລື່ອງຄວາມຫຶງຫວງ
ເປັນເຄື່ອງບູຊາໃຫ້ລະນຶກເຖິງຄວາມຊົ່ວຊ້າ

16ແລະປະໂລຫິດຈະພານາງມາໃກ້ ໃຫ້ເຂົ້າເຝົ້າພຣະຜູ້ເປັນເຈົ້າ 17ແລະປະໂລຫິດຈະເອົານ້ຳ
ບໍລິສຸດທີ່ໃສ່ພາຊະນະດິນ ແລະຈະເອົາຂີ້ຝຸ່ນດິນທີ່ພື້ນທໍາເຕັນສັກສິດໃສ່ໃນນ້ຳນັ້ນ 18ແລະປະ-
ໂລຫິດຈະໃຫ້ນາງເຂົ້າເຝົ້າພຣະຜູ້ເປັນເຈົ້າ ແລະແກ້ມວຍຜົມຂອງນາງອອກ ແລະສິ່ງເຄື່ອງບູ-
ຊາແຫ່ງການລະນຶກໃຫ້ນາງຖືໄວ້ ອັນເປັນເຄື່ອງບູຊາແຫ່ງຄວາມຫຶງຫວງ ແລ້ວປະໂລຫິດຈະຖື-

ນ້ຳແຫ່ງຄວາມຂົມຂື່ນທີ່ນຳການສາບແຊ່ງນັ້ນໄວ້ເອງ [19]ແລ້ວປະໂລຫິດຈະໃຫ້ນາງປະຕິຍານຕົນ
ວ່າ 'ຖ້າບໍ່ມີຊາຍໃດມານອນກັບເຈົ້າ ຫລືເຈົ້າບໍ່ທັນ ເຫໄປເຮັດຕົນໃຫ້ມີມົນທິນ ເມື່ອເຈົ້າຍັງຢູ່ໃນ
ອຳນາດຂອງຜົວ ກໍໃຫ້ເຈົ້າພົ້ນຈາກນ້ຳແຫ່ງຄວາມຂົມຂື່ນ ທີ່ເປັນຄຳສາບແຊ່ງນີ້ [20]ແຕ່ຖ້າເຈົ້າ
ໄດ້ຫລົງໄປ ແມ່ນວ່າເຈົ້າຢູ່ໃນອຳນາດຂອງຜົວ ແລະໄດ້ເຮັດຕົວເອງໃຫ້ເປັນມົນທິນ ແລະຊາຍ
ອື່ນນອກຈາກຜົວໄດ້ເຂົ້າມານອນນຳແລ້ວ' [21]ກໍໃຫ້ປະໂລຫິດເຮັດໃຫ້ຍິງນັ້ນກ່າວຄຳປະຕິຍານ
ສາບແຊ່ງ ແລະປະໂລຫິດຈະກ່າວແກ່ຜູ້ຍິງ ນັ້ນວ່າ 'ຂໍໃຫ້ພຣະຜູ້ເປັນເຈົ້າຊົງສາບແຊ່ງເຈົ້າ
ແລະເປັນຄຳປະຕິຍານທ່າມກາງຊົນຊາດຂອງເຈົ້າ ໃນເມື່ອພຣະຜູ້ເປັນເຈົ້າເຮັດໃຫ້ກົກຂາເຈົ້າ
ລີບ ແລະເຮັດໃຫ້ທ້ອງເຈົ້າໃຄ່ [22]ຂໍໃຫ້ນ້ຳແຫ່ງຄຳສາບແຊ່ງນີ້ເຂົ້າໃນຕົວເຈົ້າເຮັດໃຫ້ທ້ອງເຈົ້າ
ໃຄ່ ແລະເຮັດໃຫ້ກົກຂາ ເຈົ້າລີບໄປ' ແລະນາງນັ້ນຈະຕ້ອງກ່າວວ່າ 'ອາແມນ ອາແມນ'

[23]ແລ້ວປະໂລຫິດຈະຂຽນຄຳສາບນີ້ລົງໃນໜັງສື ແລະລຶບຄວາມນັ້ນອອກດ້ວຍນ້ຳແຫ່ງ
ຄວາມຂົມຂື່ນ [24]ແລ້ວໃຫ້ຍິງນັ້ນດື່ມນ້ຳແຫ່ງຄວາມຂົມຂື່ນທີ່ນຳການສາບແຊ່ງ ແລ້ວນ້ຳທີ່ນຳ
ການສາບແຊ່ງ ນັ້ນຈະເຂົ້າໄປໃນຕົວນາງເຮັດໃຫ້ນາງເຈັບປວດ [25]ແລະປະໂລຫິດຈະເອົາເຄື່ອງ
ບູຊາແຫ່ງຄວາມຫຶງຫວງອອກຈາກມືນາງ ແກວ່ງໄປແກວ່ງມາ ຖວາຍບູຊາຕໍ່ພຣະພັກພຣະຜູ້-
ເປັນເຈົ້າ ແລ້ວນຳໄປຖວາຍທີ່ແທ່ນບູຊາ [26]ແລະປະໂລຫິດຈະຈັບເອົາເຄື່ອງບູຊາກຳມືໜຶ່ງເປັນ
ສ່ວນທີ່ລະນຶກ ເຜົາເທິງແທ່ນບູຊາ ແລ້ວຈຶ່ງໃຫ້ນາງດື່ມນ້ຳນັ້ນ [27]ເມື່ອໃຫ້ຍິງນັ້ນດື່ມນ້ຳແລ້ວ ຕໍ່
ມາ ຖ້ານາງເຮັດຕົວໃຫ້ເປັນມົນທິນ ແລະປະພຶດນອກໃຈຜົວ ນ້ຳທີ່ນຳຄຳສາບແຊ່ງນັ້ນຈະເຂົ້າ
ໃນຕົວນາງ ເຮັດໃຫ້ນາງເຈັບປວດ ທ້ອງຂອງນາງຈະໃຄ່ ແລະກົກຂາຈະລີບໄປ ແລະຍິງນັ້ນ
ຈະຖືກຄຳສາບແຊ່ງທ່າມກາງຊົນຊາດຂອງນາງ [28]ຖ້າຍິງນັ້ນບໍ່ໄດ້ມີມົນທິນ ແຕ່ບໍລິສຸດ ນາງຈະ
ພົ້ນຄວາມຜິດ ແລະຖືພາ

[29]ນີ້ເປັນກົດເລື່ອງຄວາມຫຶງຫວງ ເມື່ອເມຍທີ່ຢູ່ໃນອຳນາດຂອງຜົວໄດ້ຫລົງໄປເຮັດໃຫ້ຕົນ
ເອງມີມົນທິນ [30]ຫລືເມື່ອຈິດຫຶງຫວງສິງຜູ້ຊາຍ ແລະລາວຫຶງຫວງເມຍຂອງລາວ ແລ້ວລາວ
ຕ້ອງໃຫ້ນາງໄປເຂົ້າເຝົ້າພຣະຜູ້ເປັນເຈົ້າ ແລະປະໂລຫິດຈະປະຕິບັດຕໍ່ນາງຕາມບັນຍັດນີ້ທຸກ
ປະການ [31]ຜູ້ຊາຍຈຶ່ງຈະພົ້ນຄວາມຊົ່ວຊ້າ ແຕ່ຜູ້ຍິງຈະຕ້ອງຮັບໂທດຕາມຄວາມຊົ່ວຊ້າຂອງ
ນາງ"

# ບົດທີ 6

## ກົດລະບຽບພວກນາຊີຣີ

[1]ພຣະຜູ້ເປັນເຈົ້າຊົງສັ່ງໂມເຊ, [2]ໃຫ້ບອກພວກອິສຣາເອນວ່າ: ຜູ້ທີ່ຈະສາບານຕົວເປັນຄົນ
ນາຊີຣີ ເພື່ອອຸທິດຖວາຍຕົວຕໍ່ພຣະຜູ້ເປັນເຈົ້ານັ້ນ ບໍ່ວ່າຊາຍ ຫລືຍິງ. [3]ຕ້ອງບໍ່ດື່ມນ້ຳອະງຸ່ນ
ຫລືເຫລົ້າ ແລະບໍ່ກິນໝາກອະງຸ່ນສົດ ຫລືແຫ້ງ. [4]ຕະຫລອດເວລາທີ່ເປັນຄົນນາຊີຣີ ຜູ້ນັ້ນຈະ
ຕ້ອງບໍ່ກິນຫຍັງຈາກຕົ້ນອະງຸ່ນຢ່າງເດັດຂາດ ແມ່ນແຕ່ແກ່ນ ຫລືເປືອກມັນກໍຕາມ.

[5]ໃນລະຫວ່າງການອຸທິດຖວາຍຕົວນັ້ນ ລາວຈະຕ້ອງບໍ່ຕັດຜົມ ຫລືແຖໜວດຕະຫລອດເວລາ
ແລະຈະຕ້ອງປະຕິບັດຕາມຄຳສາບານດັ່ງນີ້ຄື: ຢ່າຕັດຜົມ ແລະຢ່າແຖໜວດເດັດຂາດ.

6-7ຢ່າໃກ້ສົບຄົນຕາຍ ເຖິງແມ່ນວ່າ ຄົນຕາຍນັ້ນຈະແມ່ນພໍ່ແມ່ ອ້າຍເອື້ອຍນ້ອງກໍຕາມ ລາວບໍ່ຄວນເຂົ້າໄປໃກ້ຄົນເສຍຄວາມບໍລິສຸດ ເພາະວ່າຜົມຂອງລາວເປັນເຄື່ອງໝາຍໃນການອຸທິດຖວາຍຕົວຕໍ່ພຣະເຈົ້າ. 8ຕະຫລອດເວລາທີ່ເປັນຄົນນາຊີຣີຢູ່ນັ້ນ ລາວຕ້ອງເຮັດຕົນໃຫ້ບໍລິສຸດຕໍ່ພຣະຜູ້ເປັນເຈົ້າ.

9ຖ້າມີຄົນໃດຄົນໜຶ່ງຕາຍຢ່າງກະທັນຫັນຢູ່ໃກ້ຄົນນາຊີຣີ ຊຶ່ງເປັນເຫດໃຫ້ຜົມອັນສັກສິດຂອງລາວມີມົນທິນ ຄົນນາຊີຣີຜູ້ນີ້ຈະຕ້ອງຄອຍຖ້າຈົນຮອດເຈັດມື້ຈຶ່ງຕັດຜົມ ແລະແຖໜວດອອກ ແລ້ວລາວຈຶ່ງຈະກາຍເປັນຄົນບໍລິສຸດໄດ້. 10ໃນມື້ທີແປດ ລາວຕ້ອງນຳເອົານົກເຂົາ ຫລືນົກ-ກາງແກແນວລະສອງໂຕມາໃຫ້ປະໂລຫິດທີ່ປະຕູຫໍເຕັນສັກສິດ. 11ແລ້ວປະໂລຫິດຈະນຳເອົານົກໂຕໜຶ່ງມາຖວາຍບູຊາໄຖ່ບາບ ແລະອີກໂຕໜຶ່ງມາເຜົາຖວາຍບູຊາ ດ້ວຍວິທີນີ້ແຫລະ ມົນທິນອັນເກີດຈາກຄົນຕາຍນັ້ນຈະໝົດໄປ ແລະລາວຈະເປັນຄົນບໍລິສຸດໄດ້ ໃນມື້ດຽວກັນນີ້ ເທິງຫົວຂອງລາວກໍຈະປ່ຽນສະພາບເປັນຜົມທີ່ສັກສິດຄືເກົ່າ. 12ແລະຕ້ອງອຸທິດຖວາຍຕົວເປັນຄົນນາຊີຣີອີກ ເປັນເທື່ອທີສອງ ຄືລາວຈະຕ້ອງນຳເອົາແກະເຖິກຊຶ່ງມີອາຍຸໜຶ່ງປີມາຖວາຍບູຊາ ເພາະວ່າການສາບານຕົວເທື່ອກ່ອນນັ້ນເປັນໂມຄະ ຍ້ອນວ່າຜົມສັກສິດຂອງລາວມີມົນທິນ.

13ເມື່ອເວລາຄົບກຳນົດອຸທິດຖວາຍຕົວແລ້ວ ຄົນນາຊີຣີຈະຕ້ອງປະຕິບັດຕາມກົດເກນຂອງສາດສະໜາ ຄືຕ້ອງໄປທີ່ປະຕູຫໍເຕັນສັກສິດ. 14ແລະນຳສັດທີ່ມີສຸຂະພາບສົມບູນສາມໂຕມາຖວາຍບູຊາຕໍ່ພຣະພັກພຣະຜູ້ເປັນເຈົ້າ ຄືແກະເຖິກອາຍຸໜຶ່ງປີສຳລັບເຜົາຖວາຍບູຊາ ແກະແມ່ອາຍຸໜຶ່ງປີສຳລັບຖວາຍບູຊາໄຖ່ບາບ ແລະແບ້ເຖິກສຳລັບຖວາຍບູຊາເພື່ອຄວາມສາມັກຄີ. 15ນອກຈາກນີ້ ລາວຈະຕ້ອງຖວາຍເຂົ້າຈີ່ທີ່ບໍ່ມີເຊື້ອແປ້ງກະຕ່າໜຶ່ງ ເຂົ້າໜົມແຜ່ນໜາໆ ທີ່ເຮັດດ້ວຍແປ້ງປະສົມກັບນ້ຳມັນໝາກກອກ ແລະເຂົ້າໜົມແຜ່ນບາງໆ ທີ່ປີ້ນກັນກັບນ້ຳມັນໝາກ-ກອກ ພ້ອມທັງເຄື່ອງຖວາຍທີ່ເຮັດດ້ວຍເຂົ້າ ແລະນ້ຳອະງຸ່ນຢ່າງເໝາະສົມ.

16ສິ່ງຂອງທີ່ກ່າວທັງໝົດນີ້ ປະໂລຫິດຕ້ອງເປັນຜູ້ນຳມາຖວາຍບູຊາໄຖ່ບາບ ແລະເຜົາຖວາຍຕໍ່ພຣະພັກພຣະຜູ້ເປັນເຈົ້າຄື: 17ແກະໂຕໜຶ່ງກັບເຂົ້າຈີ່ກະຕ່າໜຶ່ງມາຖວາຍເພື່ອຄວາມສາມັກຄີ ພ້ອມທັງເຂົ້າ ແລະນ້ຳອະງຸ່ນມາຖວາຍຕໍ່ພຣະພັກພຣະຜູ້ເປັນເຈົ້າ.

18ຄົນນາຊີຣີຈະຕ້ອງແຖຜົມທີ່ປະຕູຫໍເຕັນສັກສິດ ແລ້ວນຳເອົາຜົມທີ່ແຖອອກນັ້ນໄປໃສ່ກອງໄຟ ຊຶ່ງກຳລັງເຜົາຖວາຍບູຊາເພື່ອຄວາມສາມັກຄີ. 19ຕໍ່ມາ ປະໂລຫິດຈະຕ້ອງເອົາຊີ້ນຂາໜ້າຂອງແກະທີ່ຕົ້ມສຸກແລ້ວ ພ້ອມທັງເຂົ້າໜົມໜາແຜ່ນໜຶ່ງ ແລະເຂົ້າໜົມບາງແຜ່ນໜຶ່ງ ໄປໃສ່ມືຂອງຄົນນາຊີຣີ. 20ຫລັງຈາກນັ້ນ ປະໂລຫິດຈະຕ້ອງນຳສິ່ງເຫລົ່ານີ້ສະເໜີຕໍ່ພຣະຜູ້ເປັນເຈົ້າ ເພື່ອເປັນຂອງຂວັນສັກສິດສຳລັບປະໂລຫິດ ນອກຈາກນີ້ແລ້ວ ຊີ້ນໜ້າເອິກ ແລະຂາຂອງແກະຕ້ອງຕັດເປັນຂອງປະໂລຫິດ ຈາກນັ້ນ ຄົນນາຊີຣີຈຶ່ງດື່ມເຫລົ້າອະງຸ່ນໄດ້.

21ສິ່ງທີ່ກ່າວມານີ້ ເປັນກົດລະບຽບຂອງຄົນນາຊີຣີ ແຕ່ວ່າ ຖ້າຄົນນາຊີຣີຜູ້ໜຶ່ງຜູ້ໃດສັນຍາຈະຖວາຍບູຊານອກເໜືອໄປຈາກນີ້ ຕາມທີ່ລາວຄິດວ່າເໝາະສົມ ລາວຈະຕ້ອງປະຕິບັດ ໃຫ້ບັນລຸຜົນສຳເລັດຕາມທີ່ໄດ້ສັນຍາໄວ້.

### ຄຳອວຍພອນຂອງປະໂລຫິດ

22-23ພຣະຜູ້ເປັນເຈົ້າ ຊົງສັ່ງ ໂມເຊ ວ່າ ໃຫ້ບອກ ອາໂຣນ ແລະພວກລູກຂອງ ເພິ່ນອວຍພອນ
ພວກ ອິສຣາເອນ ຕາມເນື້ອຄວາມດັ່ງຕໍ່ໄປນີ້:

24 ຂໍໃຫ້ພຣະຜູ້ເປັນເຈົ້າ ຊົງອວຍພອນ
ແລະເບິ່ງແຍງຮັກສາພວກເຈົ້າ.
25 ຂໍໃຫ້ພຣະຜູ້ເປັນເຈົ້າ ຊົງເມດຕາປານີ
ແລະມີພຣະໄທອ່ອນໂຍນຕໍ່ພວກເຈົ້າ.
26 ຂໍໃຫ້ພຣະຜູ້ເປັນເຈົ້າ ຊົງເບິ່ງແຍງພວກເຈົ້າດ້ວຍຄວາມເມດຕາປານີ
ແລະຊົງໂຜດໃຫ້ພວກເຈົ້າມີຄວາມສະຫງົບສຸກ.

27ຖ້າວ່າພວກເຂົາໃຊ້ຄຳອວຍພອນນີ້ອ້ອນວອນຕໍ່ ພຣະຜູ້ເປັນເຈົ້າ ສຳລັບພວກ ອິສຣາເອນ
ພຣະອົງຈຶ່ງຈະອວຍພອນໃຫ້.

# ບົດທີ 7

## ການຖວາຍສິ່ງຂອງຂອງບັນດາຜູ້ນຳຄົນອິສຣາເອນ

1ໃນມື້ທີ່ ໂມເຊ ຈັດຕັ້ງຫໍເຕັນສັກສິດສຳເລັດ ທັງໄດ້ເຈີມ ແລະໄດ້ຊຳລະຫໍເຕັນສັກສິດກັບບັນ-
ດາເຄື່ອງໃຊ້ສອຍປະຈຳຫໍເຕັນສັກສິດໃຫ້ບໍລິສຸດ ແລະໄດ້ເຈີມ ໄດ້ຊຳລະແທ່ນບູຊາ ກັບພາຊະ-
ນະ ປະຈຳທັງໝົດໃຫ້ບໍລິສຸດແລ້ວ 2ບັນດາຫົວໜ້າຂອງຄົນ ອິສຣາເອນ ຫົວໜ້າຍາດຕິພີ່ນ້ອງ
ຕາມບັນພະບູລຸດ ຄືຫົວໜ້າຂອງຕະກູນຕ່າງໆ ຜູ້ຢູ່ເໜືອຜູ້ທີ່ຂຶ້ນທະບຽນໄວ້ ໄດ້ເຂົ້າມາຖວາຍ
ເຄື່ອງຂອງ 3ແລະໄດ້ນຳຂອງບູຊາມາຖວາຍຕໍ່ພຣະພັກ ພຣະຜູ້ເປັນເຈົ້າ ມີກວຽນຫົກລຳ ກັບງົວ
ຫົກຄູ່ ຫົວໜ້າສອງຄົນນຳກວຽນລຳໜຶ່ງ ແລະງົວຄົນລະໂຕ ຖວາຍຢູ່ໜ້າຫໍເຕັນສັກສິດ

4ແລ້ວ ພຣະຜູ້ເປັນເຈົ້າ ກ່າວກັບ ໂມເຊ ວ່າ 5“ຈົ່ງຮັບຂອງ ເຫລົ່ານີ້ໄວ້ຈາກພວກເຂົາເພື່ອຈະໄດ້
ໃຊ້ໃນການບົວລະບັດຫໍເຕັນສັກສິດ ແຫ່ງຊຸມນຸມ ຈົ່ງມອບໄວ້ກັບຄົນ ເລວີ ແກ່ທຸກຄົນຕາມງານ
ບົວລະບັດຂອງພວກເຂົາ”

6ໂມເຊ ຈຶ່ງນຳກວຽນ ແລະງົວໄປມອບໃຫ້ແກ່ຄົນ ເລວີ 7ເພິ່ນໃຫ້ກວຽນສອງລຳກັບງົວສອງຄູ່
ແກ່ລູກຊາຍທັງຫລາຍຂອງ ເກໂຊນ ຕາມງານບົວລະບັດຂອງພວກເຂົາ 8ເພິ່ນມອບກວຽນສີ່ລຳ
ແລະງົວສີ່ຄູ່ໃຫ້ແກ່ລູກຊາຍທັງຫລາຍຂອງ ເມຣາຣີ ຕາມງານບົວລະບັດຂອງພວກເຂົາ ຊຶ່ງເປັນ
ຕາມຄຳຊີ້ແຈງຂອງ ອີທາມາ ລູກຊາຍ ອາໂຣນ 9ແຕ່ເພິ່ນບໍ່ໄດ້ມອບຫຍັງໃຫ້ແກ່ລູກຊາຍຂອງ ໂກ-
ຮາດ ເພາະງານບົວລະບັດຂອງພວກເຂົາເປັນງານທີ່ຕ້ອງຫາມສິ່ງຂອງບໍລິສຸດເທິງບ່າ

10ແລະບັນດາຫົວໜ້າກໍນຳຂອງບູຊາມາເພື່ອມອບຖວາຍແທ່ນບູຊາໃນມື້ທີ່ເຮັດພິທີ ເຈີມແທ່ນ
ບູຊານັ້ນ ແລະພວກຫົວໜ້າຕ່າງກໍຖວາຍເຄື່ອງບູຊາຂອງຕົນຕໍ່ໜ້າແທ່ນບູຊາ 11ພຣະຜູ້ເປັນເຈົ້າ
ກ່າວກັບ ໂມເຊ ວ່າ “ໃຫ້ພວກຫົວໜ້າມາຖວາຍ ເຄື່ອງບູຊາຂອງພວກເຂົາມື້ລະຄົນ ໃນງານມອບ
ຖວາຍແທ່ນບູຊາ”

12ຜູ້ ທີ່ ຖວາຍ ເຄື່ອງ ບູຊາ ໃນ ມື້ ທຳອິດ ຄື ນາໂຊນ ລູກ ຊາຍ ອຳມີນາດາບ ແຫ່ງ ຕະກູນ ຢູດາ

13ເຄື່ອງຖວາຍຂອງລາວຄືຈານເງິນໜ່ວຍໜຶ່ງ ໜັກໜຶ່ງຮ້ອຍສາມສິບເຊເຂ ແລະຊາມເງິນໜ່ວຍ
ໜຶ່ງໜັກເຈັດສິບເຊເຂຕາມເຊເຂຂອງສະຖານທີ່ບໍລິສຸດ ພາຊະນະທັງສອງນີ້ມີຍອດແປ້ງປະສົມ
ກັບນ້ຳມັນເຕັມເພື່ອເປັນເຄື່ອງບູຊາພືດຜົນເປັນເມັດ 14ບ່ວງຄຳອັນໜຶ່ງໜັກສິບເຊເຂ ມີເຄື່ອງ
ຫອມສຳລັບເຜົາເຕັມ 15ງົວໜຸ່ມໂຕໜຶ່ງ ແກະຜູ້ໂຕໜຶ່ງ ລູກແກະອາຍຸໜຶ່ງປີໂຕໜຶ່ງ ເປັນເຄື່ອງ
ເຜົາບູຊາ 16ລູກແບ້ຜູ້ໂຕໜຶ່ງເປັນເຄື່ອງບູຊາໄຖ່ບາບ 17ງົວເຖິກສອງໂຕ ແກະຜູ້ຫ້າໂຕ ແບ້ຜູ້ຫ້າ
ໂຕ ລູກແກະອາຍຸໜຶ່ງປີຫ້າໂຕ ເປັນເຄື່ອງບູຊາເພື່ອຄວາມສາມັກຄີທຳ ສິ່ງເຫລົ່ານີ້ເປັນຂອງ
ຖວາຍຂອງ ນາໂຊນ ລູກຊາຍຂອງ ອຳມີນາດາບ

18ມື້ທີສອງ ເນທາເນນ ລູກຊາຍ ຊູອາ ຫົວໜ້າຂອງຕະກູນ ອິດຊາຄາ ຖວາຍ ເຄື່ອງ 19ເຄື່ອງ
ຖວາຍຂອງລາວແມ່ນຈານເງິນອັນໜຶ່ງໜັກໜຶ່ງຮ້ອຍສາມສິບເຊເຂ ຊາມເງິນ ໃບໜຶ່ງໜັກເຈັດ
ສິບເຊເຂຕາມເຊເຂຂອງສະຖານທີ່ບໍລິສຸດ ພາຊະນະທັງສອງນີ້ມີຍອດແປ້ງປະສົມກັບນ້ຳມັນ
ເຕັມເພື່ອເປັນເຄື່ອງບູຊາພືດຜົນເປັນເມັດ 20ບ່ວງຄຳອັນໜຶ່ງໜັກສິບເຊເຂ ມີເຄື່ອງຫອມສຳລັບ
ເຜົາເຕັມ 21ງົວໜຸ່ມໂຕໜຶ່ງ ແກະຜູ້ໂຕໜຶ່ງ ລູກແກະອາຍຸໜຶ່ງປີໂຕໜຶ່ງ ເປັນເຄື່ອງເຜົາບູຊາ
22ລູກແບ້ຜູ້ໂຕໜຶ່ງເປັນເຄື່ອງບູຊາໄຖ່ບາບ 23ແລະງົວເຖິກສອງໂຕ ແກະຜູ້ຫ້າໂຕ ແບ້ຜູ້ຫ້າໂຕ
ລູກແກະອາຍຸໜຶ່ງປີຫ້າໂຕ ເປັນເຄື່ອງບູຊາເພື່ອຄວາມສາມັກຄີທຳ ສິ່ງເຫລົ່ານີ້ເປັນເຄື່ອງຖວາຍ
ຂອງ ເນທາເນນ ລູກຊາຍຂອງ ຊູອາ

24ມື້ທີສາມ ເອລີອາບ ລູກຊາຍ ເຮໂລນ ຫົວໜ້າຂອງລູກຫລານ ເຊບູລູນ ຖວາຍ ເຄື່ອງ 25ເຄື່ອງ
ຖວາຍຂອງເຂົາຄືຈານເງິນໃບໜຶ່ງໜັກໜຶ່ງຮ້ອຍສາມສິບເຊເຂ ຊາມເງິນໃບໜຶ່ງໜັກເຈັດສິບເຊ
ເຂຕາມເຊເຂຂອງສະຖານທີ່ບໍລິສຸດ ພາຊະນະທັງສອງນີ້ມີຍອດແປ້ງປະສົມກັບນ້ຳມັນເຕັມເພື່ອ
ເປັນເຄື່ອງບູຊາພືດຜົນເປັນເມັດ 26ບ່ວງຄຳອັນໜຶ່ງໜັກສິບເຊເຂ ມີເຄື່ອງຫອມສຳລັບເຜົາເຕັມ
27ງົວໜຸ່ມໂຕໜຶ່ງ ແກະຜູ້ໂຕໜຶ່ງ ລູກແກະອາຍຸໜຶ່ງປີໂຕໜຶ່ງ ເປັນເຄື່ອງເຜົາບູຊາ 28ລູກແບ້ຜູ້ໂຕ
ໜຶ່ງເປັນເຄື່ອງບູຊາໄຖ່ບາບ 29ງົວເຖິກສອງໂຕ ແກະຜູ້ຫ້າໂຕ ແບ້ຜູ້ຫ້າໂຕ ລູກແກະອາຍຸໜຶ່ງປີ
ຫ້າໂຕ ເປັນເຄື່ອງບູຊາເພື່ອຄວາມສາມັກຄີທຳ ສິ່ງເຫລົ່ານີ້ເປັນເຄື່ອງຖວາຍຂອງ ເອລີອາບ ລູກ
ຊາຍຂອງ ເຮໂລນ

30ມື້ທີສີ່ ເອລີຊູ ລູກຊາຍຂອງ ເຊເດອູ ປະມຸກຂອງລູກຫລານ ຣູເບັນ ຖວາຍ ເຄື່ອງ 31ເຄື່ອງ
ຖວາຍຂອງລາວຄືຈານເງິນໃບໜຶ່ງໜັກໜຶ່ງຮ້ອຍສາມສິບເຊເຂ ຊາມເງິນໃບໜຶ່ງໜັກເຈັດສິບເຊ
ເຂຕາມເຊເຂຂອງສະຖານທີ່ບໍລິສຸດ ພາຊະນະທັງສອງນີ້ມີຍອດແປ້ງປະສົມກັບນ້ຳມັນເຕັມເພື່ອ
ເປັນເຄື່ອງບູຊາພືດຜົນເປັນເມັດ 32ບ່ວງຄຳໃບໜຶ່ງໜັກສິບເຊເຂ ມີເຄື່ອງຫອມສຳລັບເຜົາເຕັມ
33ງົວໜຸ່ມໂຕໜຶ່ງ ແກະຜູ້ໂຕໜຶ່ງ ລູກແກະອາຍຸໜຶ່ງປີໂຕໜຶ່ງ ເປັນເຄື່ອງເຜົາບູຊາ 34ລູກແບ້ຜູ້ໂຕ
ໜຶ່ງເປັນເຄື່ອງບູຊາໄຖ່ບາບ 35ງົວເຖິກສອງໂຕ ແກະຜູ້ຫ້າໂຕ ແບ້ຜູ້ຫ້າໂຕ ລູກແກະອາຍຸໜຶ່ງປີ
ຫ້າໂຕ ເປັນເຄື່ອງບູຊາເພື່ອຄວາມສາມັກຄີທຳ ສິ່ງເຫລົ່ານີ້ເປັນເຄື່ອງຖວາຍຂອງ ເອລີຊູ ລູກຊາຍ
ຂອງ ເຊເດອູ

36ມື້ທີຫ້າ ເຊລູມີເອນ ລູກຊາຍ ຊູຣີຊັດດາຍ ຫົວໜ້າຂອງຄົນຊີເມໂອນ ຖວາຍເຄື່ອງ 37ເຄື່ອງ
ຖວາຍຂອງລາວຄືຈານເງິນໃບໜຶ່ງໜັກໜຶ່ງຮ້ອຍສາມສິບເຊເຂ ຊາມເງິນໃບໜຶ່ງໜັກເຈັດສິບເຊ

ເຊຕາມເຊເຂຂອງສະຖານທີ່ບໍລິສຸດ ພາຊະນະທັງສອງນີ້ມີຍອດແປ້ງປະສົມກັບນ້ຳມັນເຕັມເພື່ອ
ເປັນເຄື່ອງບູຊາພືດຜົນເປັນເມັດ 38ບ່ວງຄຳອັນໜຶ່ງໜັກສິບເຊເຂ ມີເຄື່ອງຫອມສຳລັບເຜົາເຕັມ
39ງົວໜຸ່ມໂຕໜຶ່ງ ແກະຜູ້ໂຕໜຶ່ງ ລູກແກະອາຍຸໜຶ່ງປີໂຕໜຶ່ງ ເປັນເຄື່ອງເຜົາບູຊາ 40ລູກແບ້ຜູ້ໂຕ
ໜຶ່ງເປັນເຄື່ອງບູຊາໄຖ່ບາບ 41ງົວເຖິກສອງໂຕ ແກະຜູ້ຫ້າໂຕ້ ແບ້ຜູ້ຫ້າໂຕ້ ລູກແກະອາຍຸໜຶ່ງປີ
ຫ້າໂຕ ເປັນເຄື່ອງບູຊາເພື່ອຄວາມສາມັກຄີທຳ ສິ່ງເຫລົ່ານີ້ເປັນເຄື່ອງຖວາຍຂອງ ເຊລູມີເອນ ລູກ
ຊາຍຂອງ ຊູຣີຊັດດາຍ
42ມື້ທີ ຫົກ ເອລີຢາສັບ ລູກ ຊາຍ ດູເອນ ຫົວໜ້າ ຂອງ ລູກ ຫລານ ຄາດ ຖວາຍ ເຄື່ອງ 43ເຄື່ອງ
ຖວາຍຂອງລາວຄືຈານເງິນໃບໜຶ່ງໜັກໜຶ່ງຮ້ອຍສາມສິບເຊເຂ ຊາມເງິນໃບໜຶ່ງໜັກເຈັດສິບເຊ
ເຂ ຕາມເຊເຂຂອງສະຖານທີ່ບໍລິສຸດ ພາຊະນະທັງສອງນີ້ມີຍອດແປ້ງປະສົມກັບນ້ຳມັນເຕັມ
ເພື່ອເປັນເຄື່ອງບູຊາພືດຜົນເປັນເມັດ 44ບ່ວງຄຳອັນໜຶ່ງໜັກສິບເຊເຂ ມີເຄື່ອງຫອມສຳລັບເຜົາ
ເຕັມ 45ງົວໜຸ່ມໂຕໜຶ່ງ ແກະຜູ້ໂຕໜຶ່ງ ລູກແກະອາຍຸໜຶ່ງປີໂຕໜຶ່ງ ເປັນເຄື່ອງເຜົາບູຊາ 46ລູກ
ແບ້ຜູ້ໂຕໜຶ່ງເປັນເຄື່ອງບູຊາໄຖ່ບາບ 47ງົວເຖິກສອງໂຕ ແກະຜູ້ຫ້າໂຕ ແບ້ຜູ້ຫ້າໂຕ ລູກແກະ
ອາຍຸໜຶ່ງປີຫ້າໂຕ ເປັນເຄື່ອງບູຊາເພື່ອຄວາມສາມັກຄີທຳ ສິ່ງເຫລົ່ານີ້ເປັນເຄື່ອງຖວາຍຂອງ ເອ-
ລີຢາສັບ ລູກຊາຍຂອງ ດູເອນ
48ມື້ ທີ ເຈັດ ເອລີຊາມາ ລູກ ຊາຍ ອຳມີຮຸດ ຫົວໜ້າ ຂອງ ລູກ ຫລານ ເອຟຣາຢິມ ຖວາຍ ເຄື່ອງ
49ເຄື່ອງຖວາຍຂອງລາວຄືຈານເງິນໃບໜຶ່ງໜັກໜຶ່ງຮ້ອຍສາມສິບເຊເຂ ຊາມເງິນໃບໜຶ່ງໜັກເຈັດ
ສິບເຊເຂຕາມເຊເຂຂອງສະຖານທີ່ບໍລິສຸດ ພາຊະນະທັງສອງນີ້ມີຍອດແປ້ງປະສົມກັບນ້ຳມັນ
ເຕັມເພື່ອເປັນເຄື່ອງບູຊາພືດຜົນເປັນເມັດ 50ບ່ວງຄຳອັນໜຶ່ງໜັກສິບເຊເຂ ມີເຄື່ອງຫອມສຳລັບ
ເຜົາເຕັມ 51ງົວໜຸ່ມໂຕໜຶ່ງ ແກະຜູ້ໂຕໜຶ່ງ ລູກແກະອາຍຸໜຶ່ງປີໂຕໜຶ່ງ ເປັນເຄື່ອງເຜົາບູຊາ
52ລູກແບ້ຜູ້ໂຕໜຶ່ງເປັນເຄື່ອງບູຊາໄຖ່ບາບ 53ງົວເຖິກສອງໂຕ ແກະຜູ້ຫ້າໂຕ ແບ້ຜູ້ຫ້າໂຕ ລູກ
ແກະອາຍຸໜຶ່ງປີຫ້າໂຕ ເປັນເຄື່ອງບູຊາເພື່ອຄວາມສາມັກຄີທຳ ສິ່ງເຫລົ່ານີ້ເປັນເຄື່ອງຖວາຍ
ຂອງ ເອລີຊາມາ ລູກຊາຍຂອງ ອຳມີຮຸດ
54ມື້ທີ ແປດ ຄາມາລີເອັນ ລູກຊາຍ ເປດາຊູ ຫົວໜ້າ ມານາເຊ 55ເຄື່ອງຖວາຍຂອງລາວຄືຈານ
ເງິນໃບໜຶ່ງໜັກໜຶ່ງຮ້ອຍສາມສິບເຊເຂ ຊາມເງິນໃບໜຶ່ງໜັກເຈັດສິບເຊເຂຕາມເຊເຂຂອງສະ-
ຖານທີ່ບໍລິສຸດ ພາຊະນະທັງສອງນີ້ມີຍອດແປ້ງປະສົມກັບນ້ຳມັນເຕັມເພື່ອເປັນເຄື່ອງບູຊາພືດຜົນ
ເປັນເມັດ 56ບ່ວງຄຳອັນໜຶ່ງໜັກສິບເຊເຂ ມີເຄື່ອງຫອມສຳລັບເຜົາເຕັມ 57ງົວໜຸ່ມໂຕໜຶ່ງ ແກະ
ຜູ້ໂຕໜຶ່ງ ລູກແກະອາຍຸໜຶ່ງປີໂຕໜຶ່ງ ເປັນເຄື່ອງເຜົາບູຊາ 58ລູກແບ້ຜູ້ໂຕໜຶ່ງເປັນເຄື່ອງບູຊາໄຖ່
ບາບ 59ງົວເຖິກສອງໂຕ ແກະຜູ້ຫ້າໂຕ ແບ້ຜູ້ຫ້າໂຕ ລູກແກະອາຍຸໜຶ່ງປີຫ້າໂຕ ເປັນເຄື່ອງບູຊາ
ເພື່ອຄວາມສາມັກຄີທຳ ສິ່ງເຫລົ່ານີ້ເປັນເຄື່ອງຖວາຍຂອງ ຄາມາລີເອັນ ລູກຊາຍຂອງ ເປດາຊູ
60ມື້ ທີ ເກົ້າ ອາບີດານ ລູກ ຊາຍ ກິເດໂອນີ ຫົວໜ້າ ຂອງ ລູກ ຫລານ ເບັນຢາມິນ ຖວາຍ ເຄື່ອງ
61ເຄື່ອງຖວາຍຂອງລາວຄືຈານເງິນໃບໜຶ່ງໜັກໜຶ່ງຮ້ອຍສາມສິບເຊເຂ ຊາມເງິນໃບໜຶ່ງໜັກເຈັດ
ສິບເຊເຂຕາມເຊເຂຂອງສະຖານທີ່ບໍລິສຸດ ພາຊະນະທັງສອງນີ້ມີຍອດແປ້ງປະສົມກັບນ້ຳມັນ
ເຕັມເພື່ອເປັນເຄື່ອງບູຊາພືດຜົນເປັນເມັດ 62ບ່ວງຄຳອັນໜຶ່ງໜັກສິບເຊເຂ ມີເຄື່ອງຫອມສຳລັບ

ເຜົາເຕັມ [63]ງົວໜຸ່ມໂຕໜຶ່ງ ແກະຜູ້ໂຕໜຶ່ງ ລູກແກະອາຍຸໜຶ່ງປີໂຕໜຶ່ງ ເປັນເຄື່ອງເຜົາບູຊາ
[64]ລູກແບ້ຜູ້ໂຕໜຶ່ງເປັນເຄື່ອງບູຊາໄຖ່ບາບ [65]ງົວເຖິກສອງໂຕ ແກະຜູ້ຫ້າໂຕ ແບ້ຜູ້ຫ້າໂຕ ລູກ
ແກະອາຍຸໜຶ່ງປີຫ້າໂຕ ເປັນເຄື່ອງບູຊາເພື່ອຄວາມສາມັກຄີທຳ ສິ່ງເຫລົ່ານີ້ເປັນເຄື່ອງຖວາຍ
ຂອງອາບີດານລູກຊາຍຂອງກີເດໂອນີ

[66]ມື້ທີສິບ ອາຣີເອເຊ ລູກຊາຍ ອຳມີຊັດດາຍ ຫົວໜ້າຂອງລູກຫລານດານ ຖວາຍເຄື່ອງ [67]ເຄື່ອງ
ຖວາຍຂອງລາວຄືຈານເງິນໃບໜຶ່ງໜັກໜຶ່ງຮ້ອຍສາມສິບເຊເຂ ຊາມເງິນໃບໜຶ່ງໜັກເຈັດສິບເຊ
ເຂຕາມເຊເຂຂອງສະຖານທີ່ບໍລິສຸດ ພາຊະນະທັງສອງນີ້ມີຍອດແປ້ງປະສົມກັບນ້ຳມັນເຕັມເພື່ອ
ເປັນເຄື່ອງບູຊາພືດຜົນເປັນເມັດ [68]ບ່ວງຄຳອັນໜຶ່ງໜັກສິບເຊເຂ ມີເຄື່ອງຫອມສຳລັບເຜົາເຕັມ
[69]ງົວໜຸ່ມໂຕໜຶ່ງ ແກະຜູ້ໂຕໜຶ່ງ ລູກແກະອາຍຸໜຶ່ງປີໂຕໜຶ່ງ ເປັນເຄື່ອງເຜົາບູຊາ [70]ລູກແບ້ຜູ້ໂຕ
ໜຶ່ງເປັນເຄື່ອງບູຊາໄຖ່ບາບ [71]ງົວເຖິກສອງໂຕ ແກະຜູ້ຫ້າໂຕ ແບ້ຜູ້ຫ້າໂຕ ລູກແກະອາຍຸໜຶ່ງປີ
ຫ້າໂຕ ເປັນເຄື່ອງບູຊາເພື່ອຄວາມສາມັກຄີທຳ ສິ່ງເຫລົ່ານີ້ເປັນເຄື່ອງຖວາຍຂອງອາຣີເອເຊລູກ
ຊາຍຂອງອຳມີຊັດດາຍ

[72]ມື້ທີສິບເອັດ ປາກີເອນ ລູກຊາຍ ອົກຣັນ ຫົວໜ້າຂອງລູກຫລານອາເຊ ຖວາຍເຄື່ອງ [73]ເຄື່ອງ
ຖວາຍຂອງລາວຄືຈານເງິນໃບໜຶ່ງໜັກໜຶ່ງຮ້ອຍສາມສິບເຊເຂ ຊາມເງິນໃບໜຶ່ງໜັກເຈັດສິບເຊ
ເຂຕາມເຊເຂຂອງສະຖານທີ່ບໍລິສຸດ ພາຊະນະທັງສອງນີ້ມີຍອດແປ້ງປະສົມກັບນ້ຳມັນເຕັມເພື່ອ
ເປັນເຄື່ອງບູຊາພືດຜົນເປັນເມັດ [74]ບ່ວງຄຳໃບໜຶ່ງໜັກສິບເຊເຂ ມີເຄື່ອງຫອມສຳລັບເຜົາເຕັມ
[75]ງົວໜຸ່ມໂຕໜຶ່ງ ແກະຜູ້ໂຕໜຶ່ງ ລູກແກະອາຍຸໜຶ່ງປີໂຕໜຶ່ງ ເປັນເຄື່ອງເຜົາບູຊາ [76]ລູກແບ້ຜູ້ໂຕ
ໜຶ່ງເປັນເຄື່ອງບູຊາໄຖ່ບາບ [77]ງົວເຖິກສອງໂຕ ແກະຜູ້ຫ້າໂຕ ແບ້ຜູ້ຫ້າໂຕ ລູກແກະອາຍຸໜຶ່ງປີ
ຫ້າໂຕ ເປັນເຄື່ອງບູຊາເພື່ອຄວາມສາມັກຄີທຳ ສິ່ງເຫລົ່ານີ້ເປັນເຄື່ອງຖວາຍຂອງປາກີເອນລູກ
ຊາຍຂອງອົກຣັນ

[78]ມື້ທີສິບສອງ ອາຮີຣາ ລູກຊາຍ ເອນັນ ຫົວໜ້າຂອງລູກຫລານນັບທາລີ ຖວາຍເຄື່ອງ [79]ເຄື່ອງ
ຖວາຍຂອງລາວຄືຈານເງິນໃບໜຶ່ງໜັກໜຶ່ງຮ້ອຍສາມສິບເຊເຂ ຊາມເງິນໃບໜຶ່ງໜັກເຈັດສິບເຊ
ເຂຕາມເຊເຂຂອງສະຖານທີ່ບໍລິສຸດ ພາຊະນະທັງສອງນີ້ມີຍອດແປ້ງປະສົມກັບນ້ຳມັນເຕັມເພື່ອ
ເປັນເຄື່ອງບູຊາພືດຜົນເປັນເມັດ [80]ບ່ວງຄຳໃບໜຶ່ງໜັກສິບເຊເຂ ມີເຄື່ອງຫອມສຳລັບເຜົາເຕັມ
[81]ງົວໜຸ່ມໂຕໜຶ່ງ ແກະຜູ້ໂຕໜຶ່ງ ລູກແກະອາຍຸໜຶ່ງປີໂຕໜຶ່ງ ເປັນເຄື່ອງເຜົາບູຊາ [82]ລູກແບ້ຜູ້ໂຕ
ໜຶ່ງເປັນເຄື່ອງບູຊາໄຖ່ບາບ [83]ງົວເຖິກສອງໂຕ ແກະຜູ້ຫ້າໂຕ ແບ້ຜູ້ຫ້າໂຕ ລູກແກະອາຍຸໜຶ່ງປີ
ຫ້າໂຕ ເປັນເຄື່ອງບູຊາເພື່ອຄວາມສາມັກຄີທຳ ສິ່ງເຫລົ່ານີ້ເປັນເຄື່ອງຖວາຍຂອງອາຮີຣາລູກ
ຊາຍຂອງເອນັນ

[84]ຕໍ່ໄປນີ້ເປັນເຄື່ອງຖວາຍໃນງານຖວາຍແທ່ນບູຊາຈາກຫົວໜ້າຂອງຄົນອິສຣາເອນ ໃນມື້ທີ່
ມີພິທີເຈີມແທ່ນບູຊານັ້ນຄືຈານເງິນສິບສອງໃບ ຊາມເງິນສິບສອງໃບ ບ່ວງຄຳສິບສອງອັນ
[85]ຈານເງິນໃບໜຶ່ງໜັກໜຶ່ງຮ້ອຍສາມສິບເຊເຂ ແລະຊາມໃບໜຶ່ງໜັກເຈັດສິບເຊເຂ ເງິນທີ່ໃຊ້
ເຮັດພາຊະນະທັງໝົດໜັກສອງພັນສີ່ຮ້ອຍເຊເຂ ຕາມເຊເຂຂອງສະຖານທີ່ບໍລິສຸດ [86]ບ່ວງຄຳ
ສິບສອງອັນ ມີເຄື່ອງຫອມສຳລັບເຜົາເຕັມ ໜັກອັນລະສິບເຊເຂຕາມເຊເຂຂອງສະຖານທີ່ບໍລິສຸດ

ຄຳທີ່ໃຊ້ເຮັດບ່ວງທັງໝົດໜັກໜຶ່ງຮ້ອຍຊາວເຊເຂ [87]ສັດສຳລັບເຄື່ອງເຜົາບູຊາ ມີງົວເຖິກສິບ
ສອງໂຕ ແກະຜູ້ສິບສອງໂຕ ລູກແກະອາຍຸໜຶ່ງປີສິບສອງໂຕ ພ້ອມກັບເຄື່ອງບູຊາພືດຜົນເປັນ
ເມັດຄູ່ກັນ ແລະແບ້ຜູ້ສິບສອງໂຕສຳລັບເປັນເຄື່ອງບູຊາໄຖ່ບາບ [88]ສັດທັງໝົດທີ່ຖວາຍເປັນ
ເຄື່ອງບູຊາເພື່ອຄວາມສາມັກຄີທຳ ມີງົວເຖິກຊາວສີ່ໂຕ ແກະຜູ້ຫົກສິບໂຕ ແບ້ຜູ້ຫົກສິບໂຕ
ແລະລູກແກະອາຍຸໜຶ່ງປີຫົກສິບໂຕ ນີ້ແຫລະ ແມ່ນເຄື່ອງຖວາຍໃນງານຖວາຍແທ່ນບູຊາ ເມື່ອ
ໄດ້ເຮັດການເຈີມແລ້ວ

[89]ເມື່ອໂມເຊໄດ້ເຂົ້າໄປໃນຫໍເຕັນສັກສິດແຫ່ງຊຸມນຸມເພື່ອຈະຂາບທູນພຣະອົງ ເພິ່ນໄດ້ຍິນ
ພຣະສຸລະສຽງກ່າວກັບຕົນມາຈາກພຣະທີ່ນັ່ງແຫ່ງພຣະກະລຸນາ ຊຶ່ງຢູ່ເທິງຫີບພຣະບັນຍັດທ່າມ-
ກາງເຄຣຸບທັງສອງ ແລະພຣະສຸລະສຽງນັ້ນໄດ້ສົນທະນາກັບເພິ່ນ

# ບົດທີ 8

## ການຕັ້ງຕະກຽງໃຫ້ສ່ອງແສງ

[1]ພຣະຜູ້ເປັນເຈົ້າກ່າວກັບໂມເຊວ່າ [2]"ຈົ່ງກ່າວແກ່ອາໂຣນວ່າ ເມື່ອຈະຕັ້ງຕະກຽງໃຫ້ຕະກຽງ
ທັງເຈັດສ່ອງແສງຂ້າງໜ້າຄັນຕະກຽງ"

[3]ແລະອາໂຣນໄດ້ເຮັດຕາມນັ້ນ ເພິ່ນໄດ້ຕັ້ງຕະກຽງໃຫ້ສ່ອງແສງອອກທາງໜ້າຄັນຕະກຽງ
ຕາມທີ່ພຣະຜູ້ເປັນເຈົ້າຊົງສັ່ງກັບໂມເຊ [4]ຝີມືທີ່ເຮັດຄັນຕະກຽງເປັນດັ່ງນີ້ ເປັນທອງຄຳໃຊ້ຄ້ອນ
ຕີ ຕັ້ງແຕ່ຖານຂຶ້ນໄປຫາດອກ ຕາມແບບທີ່ພຣະຜູ້ເປັນເຈົ້າຊົງສະແດງແກ່ໂມເຊ ພວກເຂົາຈຶ່ງ
ເຮັດຄັນຕະກຽງຕາມນັ້ນ

## ການສະຖາປະນາຄົນເລວີ

[5]ແລະພຣະຜູ້ເປັນເຈົ້າຊົງກ່າວກັບໂມເຊວ່າ [6]"ຈົ່ງຍົກຄົນເລວີອອກຈາກລູກຫລານອິສຣາ-
ເອນ ແລະຊຳລະພວກເຂົາ [7]ເຈົ້າຈົ່ງຊຳລະພວກເຂົາດັ່ງນີ້ ຈົ່ງເອົານ້ຳຊຳລະມາຊິດໃສ່ພວກເຂົາ
ໃຫ້ພວກເຂົາແຖຂົນຕາມຕົນຕົວ ໃຫ້ຊັກເສື້ອຜ້າ ແລະຊຳລະຕົວໃຫ້ສະອາດ [8]ແລ້ວໃຫ້ພວກເຂົາ
ນຳງົວໜຸ່ມໂຕໜຶ່ງ ກັບພືດຜົນເປັນເມັດມາຖວາຍຄູ່ກັນ ຄືຍອດແປ້ງເຂົ້າລະອຽດນວດດ້ວຍນ້ຳ-
ມັນ ແລະເຈົ້າຈົ່ງນຳງົວໜຸ່ມອີກໂຕໜຶ່ງເປັນເຄື່ອງບູຊາໄຖ່ບາບ [9]ແລ້ວຈົ່ງພາລູກຫຼານເລວີມາຕໍ່-
ໜ້າຫໍເຕັນບ່ອນຊຸມນຸມ ແລະໃຫ້ລູກຫຼານອິສຣາເອນມາຊຸມນຸມພ້ອມກັນທັງໝົດ [10]ເມື່ອເຈົ້ານຳ
ພວກເລວີ ທັງຫລາຍຂາບທູນຕໍ່ພຣະພັກພຣະຜູ້ເປັນເຈົ້າ ໃຫ້ລູກຫລານອິສຣາເອນເອົາມືຂອງ
ພວກເຂົາວາງເທິງຄົນເລວີ [11]ແລະໃຫ້ອາໂຣນຖວາຍຄົນເລວີຕໍ່ພຣະພັກພຣະຜູ້ເປັນເຈົ້າໃຫ້
ເປັນເຄື່ອງບູຊາຖວາຍຈາກ ລູກຫລານອິສຣາເອນ ເພື່ອພວກເຂົາຈະໄດ້ເຮັດວຽກບົວລະບັດ
ພຣະຜູ້ເປັນເຈົ້າ [12]ແລ້ວພວກເລວີຈະເອົາມືຂອງຕົນວາງເທິງຫົວງົວເຖິກທັງສອງ ເຈົ້າຈົ່ງເອົາ
ໂຕໜຶ່ງມາຖວາຍເປັນເຄື່ອງບູຊາໄຖ່ບາບ ແລະອີກໂຕໜຶ່ງໃຫ້ເປັນເຄື່ອງເຜົາບູຊາແກ່ພຣະຜູ້-
ເປັນເຈົ້າ ເພື່ອລຶບລ້າງມົນທິນບາບຂອງຄົນເລວີ [13]ເຈົ້າຈົ່ງຕັ້ງຄົນເລວີໃຫ້ຄອຍຖ້າຮັບໃຊ້ອາ-
ໂຣນ ແລະບັນດາລູກຊາຍຂອງອາໂຣນ ແລະຈົ່ງຖວາຍພວກເຂົາໃຫ້ເປັນເຄື່ອງຖວາຍບູຊາແກ່
ພຣະຜູ້ເປັນເຈົ້າ [14]ດັ່ງນີ້ແຫລະ ເຈົ້າຈົ່ງແຍກຄົນເລວີອອກຈາກລູກຫລານອິສຣາເອນ ແລະຄົນ

ເລວີ ຈະເປັນ ຂອງເຮົາ
[15]ຕັ້ງແຕ່ນັ້ນໄປຄົນ ເລວີ ຈະເຂົ້າເຮັດວຽກທີ່ຫໍເຕັນສັກສິດແຫ່ງຊຸມນຸມ ເມື່ອເຈົ້າໄດ້ຊໍາລະພວກ
ເຂົາ ແລະໄດ້ຖວາຍພວກເຂົາໄວ້ແລ້ວ [16]ເພາະພວກເຂົາທັງໝົດຖືກແຍກອອກຈາກລູກຫລານ
ອິສຣາເອນ ແລະມອບໄວ້ແກ່ເຮົາ ເຮົາໄດ້ຮັບພວກເຂົາມາເປັນຂອງເຮົາແລ້ວ ແທນທຸກຄົນທີ່
ເກີດຈາກມົດລູກແມ່ກ່ອນຄື ແທນບຸດຫົວປີຂອງປະຊາຊົນ ອິສຣາເອນ ທັງໝົດ [17]ເພາະວ່າລູກ
ຫົວປີທັງໝົດຂອງລູກຫລານ ອິສຣາເອນ ເປັນຂອງເຮົາ ທັງຄົນ ແລະສັດ ໃນມື້ທີ່ເຮົາໄດ້ສັງຫານ
ບັນດາລູກຫົວປີ ໃນ ແຜ່ນດິນ ເອຢິບ ເຮົາໄດ້ເລືອກພວກເຂົາໄວ້ເປັນຂອງເຮົາ [18]ແລະເຮົາໄດ້
ເລືອກຄົນ ເລວີ ແທນບຸດຫົວປີທັງໝົດຂອງລູກຫລານ ອິສຣາເອນ [19]ແລະເຮົາໄດ້ມອບຄົນ ເລວີ
ຈາກລູກຫລານ ອິສຣາເອນ ໄວ້ກັບ ອາໂຣນ ແລະລູກຊາຍຂອງ ອາໂຣນ ໃຫ້ເຮັດວຽກແທນລູກ
ຫລານ ອິສຣາເອນ ທີ່ຫໍເຕັນສັກສິດ ແຫ່ງຊຸມນຸມ ແລະເຮັດການລຶບລ້າງມົນທິນໃຫ້ລູກຫລານ ອິ-
ສຣາເອນ ເພື່ອວ່າຈະບໍ່ມີໄພພິບັດບັງເກີດແກ່ລູກຫລານ ອິສຣາເອນ ເມື່ອລູກຫລານ ອິສຣາເອນ
ເຂົ້າມາໃກ້ສະຖານທີ່ບໍລິສຸດ”
[20]ໂມເຊ ອາໂຣນ ແລະຊຸມນຸມຊົນ ອິສຣາເອນ ທັງໝົດໄດ້ປະຕິບັດຕໍ່ຄົນ ເລວີ ດັ່ງນັ້ນ ຕາມທີ່
ພຣະຜູ້ເປັນເຈົ້າ ຊົງສັ່ງ ໂມເຊ ໃນ ເລື່ອງຄົນ ເລວີ ທຸກປະການ ລູກຫລານ ອິສຣາເອນ ກໍເຮັດ ດັ່ງ-
ນັ້ນ [21]ຄົນ ເລວີ ໄດ້ຊໍາລະຕົນໃຫ້ໝົດບາບ ແລະຊັກເສື້ອຜ້າຂອງຕົນ ແລະ ອາໂຣນ ກໍຖວາຍ
ພວກເຂົາເປັນເຄື່ອງບູຊາ ຖວາຍຕໍ່ພຣະພັກ ພຣະຜູ້ເປັນເຈົ້າ ແລະ ອາໂຣນ ເຮັດການລຶບລ້າງ
ມົນທິນແກ່ພວກເຂົາ [22]ແຕ່ນັ້ນມາ ຄົນ ເລວີ ກໍເຂົ້າໄປເຮັດວຽກໃນຫໍເຕັນສັກສິດແຫ່ງຊຸມນຸມ ຄື
ຮັບໃຊ້ ອາໂຣນ ແລະລູກຊາຍຂອງ ອາໂຣນ ຕາມທີ່ ພຣະຜູ້ເປັນເຈົ້າ ຊົງສັ່ງ ໂມເຊ ເລື່ອງຄົນ ເລວີ
ເພິ່ນຈຶ່ງໄດ້ປະຕິບັດຢ່າງນັ້ນແກ່ພວກເຂົາ
[23]ພຣະຜູ້ເປັນເຈົ້າ ກ່າວກັບ ໂມເຊ ວ່າ [24]“ເລື່ອງນີ້ກ່ຽວກັບຄົນ ເລວີ ໃຫ້ຄົນ ເລວີ ທີ່ມີອາຍຸຕັ້ງ-
ແຕ່ຊາວຫ້າປີຂຶ້ນໄປ ເຂົ້າໄປເຮັດວຽກໃນຫໍເຕັນສັກສິດແຫ່ງຊຸມນຸມ [25]ເມື່ອອາຍຸໄດ້ຫ້າສິບປີ ຈຶ່ງ
ໃຫ້ລາວຢຸດເຮັດວຽກ ບໍ່ຕ້ອງເຮັດວຽກຕໍ່ໄປອີກ [26]ແຕ່ໃຫ້ລາວຊ່ວຍພີ່ນ້ອງໃນຫໍເຕັນສັກສິດແຫ່ງ
ຊຸມນຸມຄືໃຫ້ເບິ່ງແຍງການງານ ບໍ່ຕ້ອງລົງມືເຮັດເອງ ເຈົ້າຈົ່ງປະຕິບັດເຊັ່ນນີ້ແກ່ຄົນ ເລວີ ເມື່ອ
ກໍານົດວຽກໃຫ້ພວກເຂົາ”

# ບົດທີ 9

## ຄໍາສັ່ງສອນເລື່ອງເທດສະການປັດສະຄາ

[1]ໃນ ເດືອນທີ່ໜຶ່ງປີທີສອງຕັ້ງແຕ່ພວກເຂົາໄດ້ອອກຈາກແຜ່ນດິນ ເອຢິບ ພຣະຜູ້ເປັນເຈົ້າ ຊົງ
ກ່າວກັບ ໂມເຊ ທີ່ຖິ່ນແຫ້ງແລ້ງກັນດານ ຊີນາຍ ວ່າ.
[2]“ໃຫ້ລູກຫລານ ອິສຣາເອນ ຖືເທດສະການ ປັດສະຄາ ຕາມເວລາທີ່ກໍານົດໄວ້ [3]ຄືເດືອນນີ້ໃນມື້
ຂຶ້ນສິບສີ່ຄໍ່າ ເວລາຕອນແລງ ພວກເຈົ້າຈົ່ງຖືເທດສະການ ປັດສະຄາ ຕາມເວລາທີ່ກໍານົດນັ້ນ
ພວກເຈົ້າຈົ່ງປະຕິບັດຕາມກົດເກນ ແລະພິທີທັງໝົດຂອງເທດສະການນັ້ນ” [4]ໂມເຊ ຈຶ່ງບອກລູກ
ຫຼານ ອິສຣາເອນ ໃຫ້ຖືເທດສະການ ປັດສະຄາ [5]ພວກເຂົາໄດ້ຖືເທດສະການ ປັດສະຄາ ໃນ ເດືອນ

ທີໜຶ່ງມື້ຂຶ້ນສິບສີ່ຄ່ຳ ຕອນແລງໃນຖິ່ນແຫ້ງແລ້ງກັນດານຊີນາຍ ທີ່ພຣະຜູ້ເປັນເຈົ້າໄດ້ສັ່ງໄວ້
ກັບໂມເຊທຸກປະການ, ລູກຫລານອິສຣາເອນກໍປະຕິບັດຕາມຢ່າງນັ້ນ.
6ແລະມີຜູ້ຊາຍບາງຄົນທີ່ມີມົນທິນເພາະຖືກຕ້ອງສົບ ຈຶ່ງຖືປັດສະຄາໃນມື້ນັ້ນບໍ່ໄດ້ ພວກເຂົາ
ຈຶ່ງມາຢູ່ຕໍ່ໜ້າໂມເຊ ແລະ ອາໂຣນ ໃນມື້ນັ້ນ 7ພວກເຂົາເຫລົ່ານັ້ນກ່າວແກ່ເພິ່ນວ່າ "ພວກເຮົາມີ
ມົນທິນເພາະໄດ້ຖືກຕ້ອງສົບ ເປັນຫຍັງຈຶ່ງຫ້າມບໍ່ໃຫ້ພວກເຮົາຖວາຍເຄື່ອງບູຊາຕໍ່ພຣະຜູ້ເປັນ-
ເຈົ້າຕາມວັນເວລາກຳນົດທ່າມກາງລູກຫລານ ອິສຣາເອນ" 8ແລະໂມເຊບອກພວກເຂົາວ່າ "ຈົ່ງ
ຄອຍຖ້າຢູ່ກ່ອນເພື່ອເຮົາຈະຟັງເບິ່ງວ່າ ພຣະຜູ້ເປັນເຈົ້າຈະກ່າວສັ່ງຢ່າງໃດເລື່ອງພວກເຈົ້າ"
9ພຣະຜູ້ເປັນເຈົ້າກ່າວກັບໂມເຊວ່າ 10"ຈົ່ງກ່າວແກ່ລູກຫລານອິສຣາເອນວ່າ ຖ້າຜູ້ໃດໃນ
ພວກເຈົ້າ ຫລືໃນເຊື້ອສາຍຂອງເຈົ້າມີມົນທິນເພາະຖືກຕ້ອງສົບ ຫລືໄປທາງໄກກໍໃຫ້ຜູ້ນັ້ນຖືປັດ-
ສະຄາແກ່ພຣະຜູ້ເປັນເຈົ້າ 11ໃຫ້ຖືປັດສະຄາໃນເດືອນທີສອງມື້ຂຶ້ນສິບສີ່ຄ່ຳ ເວລາຕອນແລງ
ໃຫ້ພວກເຂົາກິນເຂົ້າຈີ່ບໍ່ມີເຊື້ອແປ້ງແລະຜັກລົດຂົມ 12ພວກ ເຂົາຕ້ອງບໍ່ໃຫ້ຫຍັງເຫລືອຈົນຮອດ
ມື້ອື່ນເຊົ້າ ແລະບໍ່ຫັກກະດູກແກະປັດສະຄາ ໃຫ້ປະຕິບັດຕາມກົດໃນເລື່ອງການຖືເທດສະການ
ປັດສະຄາທຸກປະການ
13ແຕ່ຄົນທີ່ສະອາດ ແລະບໍ່ໄດ້ເດີນທາງໄປໄກແຕ່ງົດ ບໍ່ຖືເທດສະການປັດສະຄາ ໃຫ້ຕັດຜູ້
ນັ້ນຈາກທ່າມກາງຊົນຊາດຂອງຕົນ ເພາະລາວບໍ່ໄດ້ນຳເຄື່ອງບູຊາຂອງພຣະຜູ້ເປັນເຈົ້າມາ
ຖວາຍຕາມກຳນົດ ຜູ້ນັ້ນຈະຕ້ອງໄດ້ຮັບໂທດບາບ 14ຖ້າຄົນຕ່າງດ້າວມາອາໄສຢູ່ທ່າມກາງພວກ
ເຈົ້າ ຢາກຖືເທດສະການປັດສະຄາແກ່ພຣະຜູ້ເປັນເຈົ້າຕາມກົດຂອງເທດສະການປັດສະຄາ
ແລະຕາມລະບຽບ ກໍໃຫ້ລາວຖືໄດ້ ເຈົ້າຈົ່ງມີກົດຢ່າງດຽວກັນສຳລັບຄົນຕ່າງດ້າວ ແລະຊາວ
ເມືອງ"

## ກ້ອນເມກໄຟ

15-16ໃນມື້ທີ່ຕັ້ງຫໍເຕັນສັກສິດຂຶ້ນ ໄດ້ມີກ້ອນເມກປົກຄຸມຫໍເຕັນໃນເວລາກາງເວັນ ແລະເມກ
ນັ້ນກາຍເປັນແສງໄຟປົກຄຸມໃນເວລາກາງຄືນ. 17ເວລາໃດກ້ອນເມກຫາກລອຍຂຶ້ນໄປ ພວກອິ-
ສຣາເອນກໍມ້າງຄ້າຍຜ້າເຕັນ ແຕ່ເມື່ອກ້ອນເມກຫາກລົງມາປົກຄຸມ ພວກເຂົາກໍຕັ້ງຄ້າຍຜ້າເຕັນ
ຂຶ້ນອີກ. 18ພວກປະຊາຊົນໄດ້ມ້າງຜ້າເຕັນ ຫລືກາງມັນຂຶ້ນໃໝ່ຕາມພຣະຄຳສັ່ງຂອງພຣະຜູ້-
ເປັນເຈົ້າ ແລະພວກເຂົາໄດ້ຢູ່ໃນຜ້າເຕັນຕະຫລອດເວລາທີ່ກ້ອນເມກປົກຄຸມຢູ່. 19ເມື່ອເມກປົກ
ຄຸມເປັນເວລາຫລາຍມື້ ພວກເຂົາກໍໄດ້ເຊື່ອຟັງພຣະຜູ້ເປັນເຈົ້າ ແລະບໍ່ໄດ້ເຄື່ອນຍ້າຍໄປທາງ
ໃດ.

20ບາງເທື່ອ ເວລາໃດທີ່ກ້ອນເມກຫາກປົກຄຸມຢູ່ເປັນເວລາສອງ ຫລືສາມມື້ກໍຕາມ ພວກເຂົາ
ກໍບໍ່ໄດ້ຍົກຍ້າຍໄປໃສ ຖ້າພຣະຜູ້ເປັນເຈົ້າຊົງບອກໃຫ້ຢຸດ ພວກເຂົາກໍຢຸດ ຖ້າພຣະຜູ້ເປັນເຈົ້າ
ຊົງບອກໃຫ້ໄປ ພວກເຂົາກໍໄປ. 21ບາງເທື່ອເມກປົກຄຸມຢູ່ພຽງແຕ່ມື້ໜຶ່ງ ຫລືກາງຄືນຫາຕອນ
ເຊົ້າ ຖ້າເມກລອຍຂຶ້ນໄປໃນເວລາຕອນເຊົ້າ ພວກເຂົາກໍຍ້າຍໄປນຳໂລດ. 22ເຖິງແມ່ນວ່າ ກ້ອນ
ເມກຈະປົກຄຸມເປັນເວລາສອງມື້ ເດືອນໜຶ່ງ ຫລືປີໜຶ່ງກໍຕາມ ພວກເຂົາກໍບໍ່ໄດ້ຍ້າຍໄປທາງໃດ
ແຕ່ຄັນຖ້າກ້ອນເມກໄຫລໄປ ພວກເຂົາກໍເຄື່ອນຍ້າຍໄປໂລດ. 23ພວກເຂົາມ້າງຄ້າຍ ຫລືຕັ້ງ

ຄ້າຍຍາມຄຳສັ່ງຂອງ ພຣະຜູ້ເປັນເຈົ້າ ແລະປະຕິບັດຕາມພິທີຂອງ ພຣະຜູ້ເປັນເຈົ້າ ທີ່ໃຫ້ຜ່ານ
ທາງ ໂມເຊ.

# ບົດທີ 10

## ແກເງິນສອງອັນ

1ພຣະຜູ້ເປັນເຈົ້າກ່າວກັບ ໂມເຊວ່າ 2“ຈົ່ງເຮັດແກເງິນສອງຄັນດ້ວຍໃຊ້ຄ້ອນຕີ ເຈົ້າຈົ່ງໃຊ້ແກ
ນັ້ນເອີ້ນຊຸມນຸມ ແລະເມື່ອຍ້າຍຄ້າຍ 3ເມື່ອເປົ່າແກທັງສອງນັ້ນກໍໃຫ້ຊຸມນຸມຊົນທັງໝົດມາປະຊຸມ
ພ້ອມກັນກັບເຈົ້າທີ່ປະຕູຫໍເຕັນສັກ ສິດແຫ່ງຊຸມນຸມ

4ຖ້າເປົ່າແກຄັນດຽວໃຫ້ພວກຫົວໜ້າລູກຫລານ ອິສຣາເອນທີ່ນັບເປັນພັນໆ ມາປະຊຸມກັບເຈົ້າ
5ເມື່ອເປົ່າແກປຸກໃຫ້ບັນດາຄ້າຍທີ່ຕັ້ງຢູ່ທາງທິດຕາເວັນອອກຍົກຍ່າງອອກໄປ 6ເມື່ອເປົ່າແກປຸກ
ເທື່ອທີສອງ ໃຫ້ບັນດາຄ້າຍທີ່ຢູ່ທາງທິດໃຕ້ຍົກອອກຍ່າງໄປ ເມື່ອໃດຈະໃຫ້ຍົກຍ່າງອອກໄປກໍ
ໃຫ້ເປົ່າແກປຸກ 7ແຕ່ຖ້າຈະໃຫ້ຄົນທັງປວງມາປະຊຸມພ້ອມກັນ ຈົ່ງເປົ່າແກ ແຕ່ຢ່າເຮັດສຽງປຸກ
8ໃຫ້ລູກຊາຍຂອງ ອາໂຣນ ຄືປະໂລຫິດເປັນຄົນເປົ່າແກ ແກນີ້ຈະເປັນກົດຖາວອນຕະຫລອດຊົ່ວ
ອາຍຸຂອງເຈົ້າ 9ແລະເມື່ອພວກເຈົ້າຈະໄປເຮັດເສິກໃນແຜ່ນດິນຂອງເຈົ້າສູ້ສັດຕູຜູ້ມາບີບບັງຄັບ
ເຈົ້າ ກໍໃຫ້ເປົ່າແກເຮັດສຽງປຸກ ແລະເຈົ້າຈະເປັນທີ່ລະນຶກຕໍ່ພຣະພັກ ພຣະຜູ້ເປັນເຈົ້າ ພຣະເຈົ້າ
ຂອງເຈົ້າ ແລະເຈົ້າຈະໄດ້ພົ້ນຈາກສັດຕູຂອງເຈົ້າ

10ໃນມື້ທີ່ພວກເຈົ້າມີຄວາມຍິນດີ ແລະໃນງານເທດສະການ ແລະໃນວັນຕົ້ນເດືອນຂອງເຈົ້າ
ເຈົ້າຈົ່ງເປົ່າແກເທິງເຄື່ອງເຜົາບູຊາ ແລະເໜືອສັດບູຊາອັນເປັນເຄື່ອງບູຊາເພື່ອຄວາມສາມັກຄີ
ທຳ ໃຫ້ພຣະເຈົ້າຂອງເຈົ້າລະນຶກເຖິງເຈົ້າ ເຮົາເປັນ ພຣະຜູ້ເປັນເຈົ້າພຣະເຈົ້າຂອງເຈົ້າ”

## ການເດີນທາງຈາກຖິ່ນແຫ້ງແລ້ງກັນດານຊີນາຍ ໄປຫາຖິ່ນແຫ້ງແລ້ງກັນດານປາຣານ

11ຕໍ່ມາວັນທີຊາວເດືອນທີສອງປີທີ່ສອງ ຊົງໃຫ້ເມກນັ້ນຂຶ້ນຈາກຫໍເຕັນສັກສິດ 12ລູກຫລານ
ອິສຣາເອນກໍຍົກເດີນທາງໄປຈາກຖິ່ນແຫ້ງແລ້ງກັນດານຊີນາຍ ແລະເມກນັ້ນ ມາຢຸດຢູ່ທີ່ຖິ່ນ
ແຫ້ງແລ້ງກັນດານປາຣານ

13ພວກເຂົາໄດ້ຍົກຍ່າງອອກໄປເປັນເທື່ອທຳອິດຕາມພຣະດຳລັດຂອງ ພຣະຜູ້ເປັນເຈົ້າ ທີ່ຊົງ
ສັ່ງ ໂມເຊ

14ທຸງຄ້າຍຂອງລູກຫລານ ຢູດາ ອອກຍ່າງໄປເປັນກອງທັບກ່ອນ ມີນາໂຊນ ລູກຊາຍ ອຳມີນາ-
ດາບ ເປັນຜູ້ນຳພົນໂຍທາ

15ເນທາເນນ ລູກຊາຍ ຊູອາ ນຳພົນໂຍທາຕະກູນຂອງລູກຫລານ ອິດຊາຄາ 16ແລະ ເອລີອາບ
ລູກຊາຍ ເຮໂລນ ນຳພົນໂຍທາຕະກູນລູກຫລານ ເຊບູລູນ 17ເມື່ອຮື້ຫໍເຕັນສັກສິດລົງແລ້ວ ບັນດາ
ລູກຊາຍຂອງ ເກໂຊນ ແລະລູກຊາຍຂອງ ເມຣາຣີ ຜູ້ແບກຫາມຫໍເຕັນສັກສິດນັ້ນກໍຍົກຍ່າງໄປ

18ທຸງຄ້າຍຂອງຄົນ ຣູເບັນ ອອກຍ່າງໄປເປັນກອງທັບ ເອລີຊູ ລູກຊາຍ ເຊເດອູ ເປັນຜູ້ນຳພົນໂຍ-
ທາ 19ເຊລູມິເອນ ລູກຊາຍ ຊູຣິຊັດດາຍ ນຳພົນໂຍທາຕະກູນຂອງລູກຫລານຊີເມໂອນ 20ເອລີຢາ-

ສັບ ລູກຊາຍ ດູເອນ ນຳພົນ ໂຍທາຕະກູນ ຂອງ ລູກຫລານ ຄາດ 21ແລ້ວຄົນ ໂກຣາດ ກໍຍົກຍ່າງ
ອອກແບກຫາມສະຖານທີ່ບໍລິສຸດກ່ອນທີ່ພວກນີ້ຈະໄປເຖິງ ພວກເຂົາກໍຕັ້ງຫໍເຕັນສັກສິດສຳເລັດ
ແລ້ວ 22ທຸງຄ້າຍລູກຫລານ ເອຟຣາຢິມ ຍ່າງອອກໄປເປັນກອງທັບ ມີ ເອລີຊາມາ ລູກຊາຍ ອຳ-
ມີຮຸດ ນຳພົນໂຍທາ 23ຄາມາລີເອັນ ລູກຊາຍ ເປດາຊູ ນຳພົນໂຍທາຕະກູນ ມານາເຊ 24ອາບີ-
ດານ ລູກຊາຍ ກີເດໂອນີ ນຳພົນໂຍທາຕະກູນລູກຫລານ ເບັນຢາມິນ
25ແລ້ວທຸງຄ້າຍລູກຫລານ ດານ ເປັນພວກລະວັງທ້າຍຂອງຄ້າຍທັງໝົດ ໄດ້ຍົກຍ່າງອອກໄປ
ເປັນກອງທັບ ມີ ອາຣີເອເຊ ລູກຊາຍ ອຳມີຊັດດາຍ ນຳພົນໂຍທາ 26ປາກີເອນ ລູກຊາຍ ອົກຣັນ
ນຳພົນໂຍທາຕະກູນລູກຫລານ ອາເຊ 27ອາຮີຣາ ລູກຊາຍ ເອນັນ ນຳພົນໂຍທາຕະກູນລູກຫລານ
ນັບທາລີ 28ນີ້ເປັນອັນດັບການເດີນທາງຂອງລູກຫລານ ອິສຣາເອນ ຕາມເຫລົ່າພົນໂຍທາຂອງ
ພວກເຂົາ ເມື່ອພວກເຂົາຍົກຍ່າງອອກໄປ
29ໂມເຊ ເວົ້າກັບ ໂຮບັບ ລູກຊາຍ ເຢດໂຣ ຄົນ ມີດີອານ ພໍ່ເຖົ້າຂອງ ໂມເຊ ວ່າ "ເຮົາທັງຫລາຍ
ອອກຍ່າງໄປສູ່ທ່ານທີ່ ພຣະຜູ້ເປັນເຈົ້າ ກ່າວໄວ້ວ່າ 'ເຮົາຈະຍົກໃຫ້ແກ່ພວກເຈົ້າ' ເຊີນໄປກັບເຮົາ
ເຖີດ ແລະເຮົາທັງຫລາຍຈະເຮັດດີແກ່ທ່ານ ເພາະ ພຣະຜູ້ເປັນເຈົ້າ ຊົງສັນຍາໃຫ້ຂອງດີແກ່ຄົນ
ອິສຣາເອນ" 30ແຕ່ພວກເຂົາຕອບ ໂມເຊວ່າ "ເຮົາຈະບໍ່ໄປ ເຮົາຈະກັບໄປເມືອງຂອງເຮົາ ໄປຫາ
ວົງຍາດຂອງເຮົາ" 31ແລະ ໂມເຊ ວ່າ "ຂໍຢ່າຫວິດຈາກເຮົາໄປເລີຍ ທ່ານຮູ້ຢູ່ແລ້ວວ່າ ເຮົາຕ້ອງ
ຕັ້ງຄ້າຍຢູ່ໃນຖິ່ນແຫ້ງແລ້ງກັນດານ ແລະທ່ານຈະໄດ້ເປັນດັ່ງໜ່ວຍຕາຂອງພວກເຮົາ 32ຖ້າທ່ານ
ໄປກັບພວກເຮົາທັງຫລາຍ ພຣະຜູ້ເປັນເຈົ້າ ຊົງເຮັດດີຫຍັງແກ່ເຮົາ ພວກເຮົາຈະເຮັດຢ່າງນັ້ນແກ່
ທ່ານດ້ວຍ"

## ພວກປະຊາຊົນຕັ້ງຕົ້ນອອກເດີນທາງ

33ເມື່ອປະຊາຊົນອອກຈາກພູຊີນາຍ ທີ່ເປັນພູສັກສິດຂອງ ພຣະຜູ້ເປັນເຈົ້າ ແລ້ວ ພວກເຂົາກໍ
ໄດ້ເດີນທາງເປັນເວລາສາມມື້ ພວກເຂົາໄດ້ເອົາຫີບຄຳສັນຍາຂອງ ພຣະເຈົ້າ ແຫ່ອອກໄປກ່ອນ
ເພື່ອຫາຊອກບ່ອນ ເໝາະສົມສຳລັບຕັ້ງຄ້າຍຢູ່. 34ເວລາໃດພວກ ເຂົາ ເຄື່ອນຍ້າຍອອກ ແຕ່ລະ
ບ່ອນນັ້ນ ກ້ອນເມກຂອງ ພຣະຜູ້ເປັນເຈົ້າ ກໍຊົງຢູ່ເທິງພວກເຂົາຕະຫລອດມື້. 35ທຸກເທື່ອທີ່ຫີບຄຳ
ສັນຍາຖືກເຄື່ອນຍ້າຍ ໂມເຊຕ້ອງເວົ້າວ່າ, "ຂ້າແດ່ ພຣະຜູ້ເປັນເຈົ້າ ຂໍພຣະອົງຊົງເຮັດໃຫ້ພວກ
ສັດຕູຂອງພຣະອົງ ແຕກກະຈັດກະຈາຍ ແລະ ໃຫ້ພວກທີ່ກຽດຊັງພຣະອົງຫລົບຫລີກໜີໄປ."
36ແຕ່ວ່າ ເມື່ອໃດຢຸດເຄື່ອນຍ້າຍຫີບຄຳສັນຍາ ເພິ່ນຈະຕ້ອງເວົ້າວ່າ, "ຂ້າແດ່ ພຣະຜູ້ເປັນເຈົ້າ
ຂໍພຣະອົງຊົງກັບມາຫາພວກອິສຣາເອນທີ່ມີໝື່ນຄອບຄົວແດ່ທ້ອນ."

# ບົດທີ 11

## ຕາເບຣາ

1ປະຊາຊົນພາກັນຈົ່ມທຸກ ຈົ່ມຮ້າຍກ່ຽວກັບເລື່ອງໂຊກຮ້າຍຂອງພວກເຂົາ ຕໍ່ ພຣະຜູ້ເປັນເຈົ້າ
ເມື່ອຊົງໄດ້ຍິນດັ່ງນັ້ນ ພຣະອົງກໍຊົງພຣະພິໂລດໜັກ ຈຶ່ງເຮັດໃຫ້ເກີດມີໄຟໄໝ້ຄ້າຍພັກຂອງ
ພວກເຂົາ ໄຟໄດ້ໄໝ້ ແລະໄດ້ທຳລາຍຄ້າຍພັກໄປເບື້ອງໜຶ່ງ. 2ແລະປະຊາຊົນຈຶ່ງຮ້ອງຂໍຄວາມ

ຊ່ອຍເຫລືອຈາກໂມເຊ ດັ່ງນັ້ນ ໂມເຊຈຶ່ງອ້ອນວອນຕໍ່ພຣະຜູ້ເປັນເຈົ້າ ແລ້ວໄຟຈຶ່ງໄດ້ມອດລົງ.
3ຍ້ອນວ່າໄຟໄດ້ໄໝ້ຄ້າຍພັກຂອງພວກເຂົາ ບ່ອນນີ້ຈຶ່ງຖືກເອີ້ນວ່າ ຕາເບຣາ.

## ໂມເຊເລືອກຜູ້ນຳເຈັດສິບຄົນ

4ພວກຕ່າງດ້າວທີ່ເດີນທາງຮ່ວມກັບພວກອິສຣາເອນກໍອຶດຢາກເປັນການໃຫຍ່ ແມ່ນແຕ່ພວກ
ອິສຣາເອນກໍຍັງຮ້ອງທຸກວ່າ, "ຂໍຊີ້ນກິນແດ່." 5ຄາວຢູ່ປະເທດເອຢິບພຸ້ນ ພວກຂ້ານ້ອຍໄດ້ກິນ
ປາໂດຍບໍ່ເສຍເງິນຄຳ ແລະພວກຂ້ານ້ອຍຍັງໄດ້ກິນໝາກແຕງ ໝາກໂມ ຜັກຫອມ ຜັກບົ່ວ
ຜັກທຽມ. 6ແຕ່ດຽວນີ້ ພວກຂ້ານ້ອຍບໍ່ມີເຫື່ອແຮງເລີຍ ເພາະໃນແຕ່ລະມື້ ນອກຈາກມານາ
ແລ້ວບໍ່ມີສິ່ງອື່ນກິນອີກເລີຍ." 7-8(ມານາເປັນຄືເມດເຂົ້າສີເຫລືອງອ່ອນ ປະຊາຊົນພາກັນໄປ
ເກັບມາໂມ້ເຮັດແປ້ງ ແລ້ວຕົ້ມໃຫ້ສຸກເພື່ອເຮັດເຂົ້າໜົມແຜ່ນ ລົດຊາດຂອງມັນຄືກັບເຂົ້າຈີ່ທີ່ອົບ
ໃສ່ນ້ຳມັນໝາກກອກ. 9ມານາໄດ້ຕົກລົງມາໃນບ່ອນຕັ້ງຄ້າຍ ຊຶ່ງເປັນເວລາດຽວກັນກັບຕອນທີ່
ນ້ຳໝອກຕົກລົງໃນຍາມກາງຄືນ.)

10ໃນຂະນະທີ່ພວກເຂົາຢືນອ້ອມຢູ່ທາງປະຕູຕູບຜ້າເຕັນຂອງເພິ່ນນັ້ນ ເພິ່ນກໍໄດ້ຍິນສຽງຈົ່ມ
ທຸກຂອງປະຊາຊົນ ຝ່າຍພຣະຜູ້ເປັນເຈົ້າກໍຊົງພຣະພິໂລດພວກເຂົາ ສ່ວນໂມເຊກໍມີຄວາມທຸກ
ໃຈຢ່າງໜັກ. 11ເພິ່ນຈຶ່ງທູນຕໍ່ພຣະຜູ້ເປັນເຈົ້າວ່າ, "ເປັນຫຍັງພຣະອົງຈຶ່ງເຮັດຮ້າຍແຮງຕໍ່ຂ້າ-
ນ້ອຍແທ້? ເຫດໃດພຣະອົງຈຶ່ງບໍ່ຊົງພໍພຣະໄທກັບຂ້ານ້ອຍ? ດ້ວຍເຫດໃດພຣະອົງຈຶ່ງຊົງໃຫ້
ຂ້ານ້ອຍຮັບຜິດຊອບຄົນເຫລົ່ານີ້? 12ຂ້ານ້ອຍບໍ່ໄດ້ສ້າງຊີວິດພວກເຂົາ ຫລືນຳພວກເຂົາລົງມາ
ເກີດ ເປັນຫຍັງພຣະອົງຈຶ່ງຂໍໃຫ້ຂ້ານ້ອຍປະຕິບັດຕົນຄືກັບຜູ້ລ້ຽງ ແລະໃຫ້ອູ້ມພວກເຂົາໄວ້ໃນ
ອ້ອມແຂນຄືກັບວ່າພວກເຂົາຍັງເປັນເດັກນ້ອຍ ເພື່ອໃຫ້ພາໄປເຖິງແຜ່ນດິນທີ່ພຣະອົງຊົງສັນຍາ
ໄວ້ກັບພວກບັນພະບູລຸດຂອງພວກເຂົາ. 13ຂ້ານ້ອຍຈະໄປເອົາຊີ້ນມາຈາກໃສ ຈຶ່ງຈະພຽງພໍກັບ
ຄວາມຕ້ອງການຂອງຄົນເຫລົ່ານີ້ ເພາະພວກເຂົາກຳລັງຂໍກິນຊີ້ນຢູ່. 14ຂ້ານ້ອຍບໍ່ສາມາດຮັບ-
ຜິດຊອບພວກເຂົາເຫລົ່ານີ້ໄດ້ ມັນເປັນການເຫລືອບ່າກວ່າແຮງສຳລັບຂ້ານ້ອຍແລ້ວ. 15ຖ້າ
ພຣະອົງເຮັດຕໍ່ຂ້ານ້ອຍຢ່າງນີ້ ຂໍໂຜດປະຫານຊີວິດຂອງຂ້ານ້ອຍສາ ເພື່ອວ່າຂ້ານ້ອຍຈະບໍ່ໄດ້
ທົນທຸກຕໍ່ພຣະພິໂລດຂອງພຣະອົງອີກຕໍ່ໄປ."

16ພຣະຜູ້ເປັນເຈົ້າຊົງກ່າວຕໍ່ໂມເຊວ່າ, "ຈົ່ງຮີບໂຮມເອົາພວກຜູ້ນຳເຈັດສິບຄົນ ຊຶ່ງເປັນຜູ້ທີ່
ເຂົ້າໃຈໃນການນຳປະຊາຊົນ ຈົ່ງພາພວກເຫລົ່ານີ້ມາຫາເຮົາທີ່ຫໍເຕັນສັກສິດແຫ່ງ ແລ້ວບອກໃຫ້
ພວກເຂົາຢືນຢູ່ໃກ້ເຈົ້າ. 17ເຮົາຈະລົງມາເວົ້າກັບເຈົ້າຢູ່ບ່ອນນັ້ນ ແລະເຮົາຈະໃຫ້ອຳນາດຄືພຣະ-
ວິນຍານບາງສ່ວນແກ່ພວກເຂົາ ແລ້ວພວກເຂົາກໍຈະສາມາດຮັບພາລະຊ່ອຍເຫລືອພວກປະຊາ-
ຊົນເຫລົ່ານີ້ ສ່ວນເຈົ້າກໍຈະບໍ່ໄດ້ຮັບພາລະນີ້ແຕ່ຄົນດຽວ.

18ຈົ່ງບອກປະຊາຊົນໃຫ້ຊຳລະຕົນໃຫ້ບໍລິສຸດໃນມື້ອື່ນ ແລ້ວພວກເຂົາກໍຈະມີຊີ້ນກິນ ເພາະ
ພວກເຂົາຮ້ອງຂໍຕໍ່ພຣະຜູ້ເປັນເຈົ້າວ່າ ໃຜຈະເອົາຊີ້ນໃຫ້ພວກເຂົາກິນ ຖ້າພວກເຂົາຢູ່ປະເທດ
ເອຢິບກໍຈະດີກວ່ານີ້ ແລະໃນເວລານີ້ ພຣະຜູ້ເປັນເຈົ້າກໍຈະໃຫ້ພວກເຈົ້າມີຊີ້ນກິນ. 19ພວກເຈົ້າ
ຈະມີຊີ້ນກິນບໍ່ແມ່ນວ່າພຽງແຕ່ມື້ໜຶ່ງ ຫລືສອງມື້ ຫ້າມື້ ຫລືຊາວມື້ເທົ່ານັ້ນ. 20ແຕ່ຈະມີກິນຕະ-
ຫລອດເດືອນຈົນມັນລົ້ນອອກມາຈາກຮູດັງຂອງພວກເຈົ້າ ສິ່ງເຫລົ່ານີ້ຈະເກີດຂຶ້ນເພາະວ່າພວກ

ເຈົ້າໄດ້ປະຖິ້ມພຣະຜູ້ເປັນເຈົ້າຜູ້ຊົງສະຖິດຢູ່ກັບພວກເຈົ້າ ແລະພວກເຈົ້າໄດ້ຮ້ອງທຸກຕໍ່ພຣະອົງ
ວ່າ ພວກເຮົາເສຍໃຈທີ່ໄດ້ອອກໜີຈາກປະເທດເອຢິບ.”
21ໂມເຊທູນຕໍ່ພຣະຜູ້ເປັນເຈົ້າວ່າ, “ຜູ້ຊາຍສະກັນທີ່ຂ້ານ້ອຍກຳລັງນຳໜ້າໄປມີເຖິງຫົກແສນ
ຄົນ ແຕ່ພຣະອົງຊົງບອກວ່າຈະປະທານຊີ້ນໃຫ້ພວກເຂົາກິນຢ່າງພຽງພໍສຳລັບໜຶ່ງເດືອນ. 22ຈະ
ຕ້ອງຂ້າງົວ ແລະແກະຈັກໂຕ ຈະພໍກິນ? ຫລືປາທັງໝົດໃນນໍ້າທະເລອີກຈັກເທົ່າໃດຈຶ່ງຈະພໍໃຫ້
ປະຊາຊົນກິນອີ່ມ? 23ພຣະຜູ້ເປັນເຈົ້າຊົງຕອບວ່າ, “ເຈົ້າຄິດວ່າອຳນາດຂອງເຮົາມີຂອບເຂດ
ຈຳກັດຊັ້ນບໍ? ໃນບໍ່ຊ້ານີ້ເຈົ້າຈະໄດ້ເຫັນວ່າ ຄຳທີ່ເຮົາໄດ້ເວົ້າໄປນັ້ນຈະເກີດຂຶ້ນແທ້ ຫລືບໍ່?”
24ດັ່ງນັ້ນ ໂມເຊຈຶ່ງໄດ້ອອກໄປບອກປະຊາຊົນຕາມທີ່ພຣະຜູ້ເປັນເຈົ້າຊົງກ່າວໄວ້ ເພິ່ນໄດ້
ທ້ອນໂຮມພວກຜູ້ນຳເຈັດສິບຄົນ ແລະໄດ້ຈັດໃຫ້ທຸກຄົນໄປຢືນອ້ອມຫໍເຕັນສັກສິດ. 25ແລ້ວ
ພຣະຜູ້ເປັນເຈົ້າຊົງສະເດັດລົງມາເປັນກ້ອນເມກແລະກ່າວກັບໂມເຊ ໃນຂະນະດຽວກັນນັ້ນ
ພຣະອົງກໍຊົງປະທານພຣະວິນຍານບໍລິສຸດທີ່ໂມເຊມີແລ້ວນັ້ນ ໃຫ້ພວກຜູ້ນຳເຈັດສິບຄົນ ເມື່ອ
ພຣະວິນຍານໄດ້ລົງມາເທິງພວກເຂົານັ້ນ ຕ່າງກໍຮ້ອງອອກເປັນສຽງດັ່ງຜູ້ປະກາດພຣະທຳ ແຕ່
ຫລັງຈາກນັ້ນພວກເຂົາບໍ່ໄດ້ກະທຳຢ່າງນັ້ນອີກ.
26ໃນຈຳນວນພວກຜູ້ນຳເຈັດສິບຄົນ ມີສອງຄົນຄື ເອັນດັດ ແລະເມດັດ ທີ່ບໍ່ໄດ້ອອກຈາກ
ຕູບຜ້າເຕັນນຳໝູ່ ແຕ່ພຣະວິນຍານໄດ້ຊົງສວມທັບພວກເຂົາທັງສອງຄົນ ພວກເຂົາຈຶ່ງຮ້ອງຂຶ້ນ
ຢ່າງດັງຄືກັບຄົນເສຍສະຕິ. 27ເມື່ອເຫັນດັ່ງນັ້ນ ຊາຍໜຸ່ມຜູ້ໜຶ່ງກໍແລ່ນໄປບອກໂມເຊ ກ່ຽວກັບ
ເລື່ອງທີ່ເກີດຂຶ້ນກັບ ເອັນດັດແລະເມດັດ. 28ແລ້ວໂຢຊວຍລູກຊາຍຂອງນູນທີ່ເປັນຜູ້ຊ່ອຍຂອງ
ໂມເຊຕັ້ງແຕ່ຍັງໜຸ່ມນ້ອຍ ໄດ້ເວົ້າຕໍ່ໂມເຊວ່າ, “ທ່ານເອີຍ ໄປບອກໃຫ້ພວກເຂົາຢຸດແມ.”
29ໂມເຊຕອບວ່າ, “ເຈົ້າມາສົນໃຈຫຍັງກັບວຽກຂອງຂ້ອຍ? ຂ້ອຍຢາກໃຫ້ພຣະຜູ້ເປັນເຈົ້າປະ-
ທານພຣະວິນຍານໃຫ້ໄພ່ພົນຂອງພຣະອົງ ເພື່ອໃຫ້ພວກເຂົາເປັນຜູ້ປະກາດພຣະທຳ.” 30ແລ້ວ
ໂມເຊພ້ອມທັງພວກຜູ້ນຳເຈັດສິບຄົນກໍພາກັນກັບຄືນເມືອຄ້າຍພັກ.

## ພຣະຜູ້ເປັນເຈົ້າຊົງສັ່ງນົກຂຸ້ມລົງມາ

31ໃນທັນໃດນັ້ນ ພຣະຜູ້ເປັນເຈົ້າຊົງບັນດານໃຫ້ມີລົມພັດມາ ແລະມີຝູງນົກຂຸ້ມບິນມາຈາກ
ທະເລ ມັນບິນຫ່າງຈາກພື້ນດິນພຽງສອງສອກເທົ່ານັ້ນ ນົກເຫລົ່ານີ້ໄດ້ມາຈັບຢູ່ຕາມຄ້າຍ ແລະ
ທົ່ວທຸກບ່ອນອ້ອມແອ້ມຄ້າຍເປັນໄລຍະຫລາຍຫລັກ. 32ດັ່ງນັ້ນ ພວກປະຊາຊົນຈຶ່ງພາກັນຈັບ
ເອົານົກຂຸ້ມນັ້ນຕະຫລອດມື້ຕະຫລອດຄືນ ທຸກຄົນຈັບໄດ້ຢ່າງຕໍ່າບໍ່ໜ້ອຍກວ່າຫ້າຍາງ ພວກເຂົາ
ໄດ້ພາກັນຄົວນົກ ແລ້ວເອົາຕາກໄວ້ເຕັມທົ່ວຄ້າຍ. 33ກ່ອນຊີ້ນຈະໝົດໄປ ແລະໃນຂະນະທີ່ຍັງມີ
ຊີ້ນກິນຢ່າງອຸດົມສົມບູນຢູ່ນັ້ນ ພຣະຜູ້ເປັນເຈົ້າຊົງພຣະພິໂລດ ແລະຊົງເຮັດໃຫ້ພວກເຂົາເກີດ
ເປັນກາລະໂລກ.
34ບ່ອນນີ້ຈຶ່ງໄດ້ໃສ່ຊື່ວ່າ ຂຸມຝັງສົບຂອງຜູ້ຂໍກິນ ເພາະວ່າພວກເຂົາໄດ້ຝັງສົບພວກທີ່ຂໍກິນຊີ້ນ
ໄວ້ຢູ່ບ່ອນນັ້ນ. 35ຫລັງຈາກນັ້ນ ພວກປະຊາຊົນກໍຍ້າຍໄປຢູ່ ຮາເຊໂຣດ ແລະພາກັນຕັ້ງຄ້າຍ
ພັກເຊົາຢູ່ທີ່ນັ້ນ.

# ບົດທີ 12

## ອາໂຣນແລະມີຣິອາມອິດສາໂມເຊ

[1]ມີຣິອາມ ແລະ ອາໂຣນ ໄດ້ເວົ້າຕິຕຽນ ໂມເຊ ເຫດຍິງຄົນ ກູເຊ ທີ່ເພິ່ນໄດ້ແຕ່ງງານນຳ ເພາະ
ໂມເຊ ໄດ້ແຕ່ງງານກັບຍິງຄົນ ກູເຊ ຄົນໜຶ່ງ [2]ພວກເຂົາທັງສອງກ່າວວ່າ “ພຣະຜູ້ເປັນເຈົ້າກ່າວ
ທາງ ໂມເຊ ຄົນດຽວເທົ່ານັ້ນຈິງຫລື ພຣະອົງບໍ່ຊົງກ່າວທາງເຮົານຳຫລື” ພຣະຜູ້ເປັນເຈົ້າ ຊົງໄດ້
ຍິນ

[3](ໂມເຊ ເປັນຄົນຖ່ອມໃຈຫລາຍຍິ່ງກວ່າຄົນທັງປວງທີ່ຢືນແຜ່ນດິນ)

[4]ທັນໃດນັ້ນ ພຣະຜູ້ເປັນເຈົ້າ ກ່າວກັບ ໂມເຊ ແລະ ອາໂຣນ ກັບ ມີຣິອາມ ວ່າ “ເຈົ້າທັງສາມຈົ່ງ
ອອກມາທີ່ຫໍເຕັນສັກສິດ ແຫ່ງຊຸມນຸມ” ພວກເຂົາທັງສາມກໍອອກມາ [5]ພຣະຜູ້ເປັນເຈົ້າກໍສະເດັດ
ລົງມາ ໃນ ເສົາ ເມກ ປະທັບຢູ່ທີ່ປະຕູຫໍເຕັນສັກສິດ ແຫ່ງຊຸມນຸມ ຊົງເອີ້ນ ອາໂຣນ ແລະ ມີຣິອາມ
ພວກເຂົາທັງສອງກໍມາຢືນຢູ່ຂ້າງໜ້າ

[6]ພຣະອົງກ່າວວ່າ “ຈົ່ງຟັງຖ້ອຍຄຳຂອງເຮົາ ຖ້າຈະມີຜູ້ພະຍາກອນ[ກ] ທ່າມກາງພວກເຈົ້າ
ເຮົາ ພຣະຜູ້ເປັນເຈົ້າ ຈະ ສະແດງ ຕົວ ແກ່ຜູ້ນັ້ນ ເປັນນິມິດ ເຮົາຈະ ເວົ້າກັບ ລາວທາງ ຄວາມຝັນ
[7]ສຳລັບ ໂມເຊ ຜູ້ຮັບ ໃຊ້ຂອງ ເຮົາກໍບໍ່ ເປັນ ເຊັ່ນນັ້ນ ໃນບໍລິວານທັງໝົດຂອງ ເຮົາ ລາວເປັນຄົນ
ສັດຊື່ [8]ເຮົາເວົ້າກັບ ເຂົາປາກຕໍ່ປາກຢ່າງຊັດເຈນ ບໍ່ເວົ້າລີ້ລັບ ແລະລາວກໍໄດ້ເຫັນສັນຖານຂອງ
ພຣະຜູ້ເປັນເຈົ້າ ເຫດໃດເຈົ້າຈຶ່ງບໍ່ຢ້ານທີ່ຈະເວົ້າຕິຕຽນ ໂມເຊຜູ້ຮັບ ໃຊ້ຂອງເຮົາ” [9]ພຣະຜູ້ເປັນ-
ເຈົ້າ ຊົງ ໂກດຮ້າຍພວກເຂົາຫລາຍ ແລ້ວສະເດັດໄປ [10]ເມື່ອເມກລອຍພົ້ນຫໍເຕັນສັກສິດໄປ ເບິ່ງ
ແມ ມີຣິອາມ ກໍເປັນພະຍາດຂີ້ທູດ ຂາວດັ່ງຫິມະ ອາໂຣນ ຫັນໄປເບິ່ງ ມີຣິອາມ ແລະ ເບິ່ງແມ
ນາງເປັນພະຍາດຂີ້ທູດ

[11]ແລະ ອາໂຣນ ເວົ້າກັບ ໂມເຊວ່າ “ຂ້າແດ່ເຈົ້ານາຍຂອງຂ້ານ້ອຍເອີຍ ຂໍຢ່າລົງໂທດບາບເຮົາ
ທັງສອງທີ່ໄດ້ເຮັດໄປດ້ວຍຄວາມໂງ່ຈ້າ ແລະບາບເຊັ່ນນີ້ [12]ຂໍຢ່າໃຫ້ມີຣິອາມ ເປັນເໝືອນຄົນທີ່
ຕາຍແລ້ວ ດັ່ງຄົນທີ່ເກີດຈາກມົດລູກແມ່ແລ້ວມີເນື້ອກຸດຫາຍໄປເຄິ່ງໜຶ່ງ”

[13]ແລະ ໂມເຊ ໄດ້ຮ້ອງທູນ ພຣະຜູ້ເປັນເຈົ້າ ວ່າ “ຂ້າແດ່ ພຣະເຈົ້າ ຂໍພຣະອົງຊົງຮັກສານາງ
ຂ້າພຣະອົງທູນອ້ອນວອນຕໍ່ພຣະອົງ” [14]ແຕ່ ພຣະຜູ້ເປັນເຈົ້າ ຊົງກ່າວກັບ ໂມເຊ ວ່າ “ຖ້າພໍ່ຂອງ
ນາງຖົ່ມນ້ຳລາຍໃສ່ໜ້ານາງ ນາງຈະອັບອາຍຢູ່ເຈັດມື້ບໍ່ແມ່ນຫລື? ຈົ່ງກັກນາງໄວ້ນອກຄ້າຍເຈັດ
ມື້ ຫລັງຈາກນັ້ນຈຶ່ງໃຫ້ກັບເຂົ້າມາໄດ້”

[15]ດັ່ງນັ້ນ ມີຣິອາມ ຈຶ່ງຖືກກັກຢູ່ນອກຄ້າຍເຈັດມື້ ແລະປະຊາຊົນກໍບໍ່ໄດ້ຍົກຍ່າງໄປຈົນກວ່າ
ມີຣິອາມ ກັບເຂົ້າມາອີກ [16]ແລ້ວຫລັງຈາກນັ້ນ ປະຊາຊົນຈຶ່ງຍົກຍ່າງຈາກຕາແສງ ຮາເຊໂຣດ ໄປ
ຕັ້ງຄ້າຍຢູ່ທີ່ຖິ່ນແຫ້ງແລ້ງກັນດານ ປາຣານ

[ກ]ຜູ້ປະກາດພຣະທຳ

# ບົດທີ 13

## ພວກນັກສືບສອດແນມ

[1]ພຣະຜູ້ເປັນເຈົ້າຊົງກ່າວຕໍ່ໂມເຊວ່າ, [2]"ຈົ່ງເລືອກເອົາຜູ້ນຳຄົນໜຶ່ງ ໃນແຕ່ລະຕະກູນໃຫ້ໄປ
ສືບສອດແນມເບິ່ງປະເທດການາອານ ຊຶ່ງເປັນບ່ອນທີ່ເຮົາໄດ້ມອບໃຫ້ພວກອິສຣາເອນ.
[3-15]ແລ້ວໂມເຊກໍປະຕິບັດຕາມໂດຍໄດ້ຈັດສົ່ງພວກຜູ້ນຳຕໍ່ໄປນີ້ອອກຈາກຖິ່ນກັນດານ ປາຣານ
ເພື່ອໄປຍັງປະເທດການາອານຄື:

| | |
|---|---|
| ຊາມມູອາລູກຊາຍຂອງຊາກູເຣ | ມາຈາກຕະກູນຣູເບັນ |
| ຊາຟາດລູກຊາຍຂອງໂຮຣີ | ມາຈາກຕະກູນຊີເມໂອນ |
| ກາເລັບລູກຊາຍຂອງເຢຟຸນເນ | ມາຈາກຕະກູນຢູດາ |
| ອີການລູກຊາຍຂອງໂຢເຊັບ | ມາຈາກຕະກູນອິດຊາຄາ |
| ໂຮເຊອາລູກຊາຍຂອງນູນ | ມາຈາກຕະກູນເອຟຣາຢິມ |
| ປັນຕິລູກຊາຍຂອງຣາຟູ | ມາຈາກຕະກູນເບັນຢາມິນ |
| ກາດດີເອນລູກຊາຍຂອງໂສດີ | ມາຈາກຕະກູນເຊບູລູນ |
| ກາດດີລູກຊາຍຂອງສູສີ | ມາຈາກຕະກູນໂຢເຊັບ (ມານາເຊ) |
| ອຳມີເອນລູກຊາຍຂອງເກມາລີ | ມາຈາກຕະກູນດານ |
| ເສທູເຣລູກຊາຍຂອງມີກາເອນ | ມາຈາກຕະກູນອາເຊ |
| ນາບີລູກຊາຍຂອງໂວບສີ | ມາຈາກຕະກູນນັບທາລີ |
| ເກອູເອນລູກຊາຍຂອງມາກີ | ມາຈາກຕະກູນຄາດ |

[16]ພວກເຫລົ່ານີ້ ຄືພວກນັກສືບສອດແນມ ທີ່ໂມເຊສົ່ງໄປສຳຫລວດກວດເບິ່ງພື້ນແຜ່ນດິນ
ການາອານ ເພິ່ນໄດ້ປ່ຽນຊື່ໃໝ່ໃຫ້ໂຮເຊອາ ລູກຊາຍຂອງນູນວ່າ ໂຢຊວຍ.
[17]ໂມເຊໄດ້ສົ່ງພວກນີ້ອອກໄປ ແລະສັ່ງພວກເຂົາວ່າ, "ໃຫ້ໄປແຕ່ທິດເໜືອຫາທິດໃຕ້ ແລະ
ຕະຫລອດທົ່ວທັງປະເທດ ແລ້ວໃຫ້ໄປຍັງເນີນພູ. [18]ເພື່ອສຳຫລວດກວດເບິ່ງວ່າ ປະເທດນີ້ເປັນ
ຢ່າງໃດ ມີປະຊາຊົນຈັກຄົນ ແລະມີກຳລັງພົນໜ້ອຍຫລາຍ ແລະເຂັ້ມແຂງປານໃດ. [19]ໃຫ້ສຳ-
ຫລວດກວດເບິ່ງອີກວ່າ ປະເທດນີ້ອຸດົມສົມບູນຫລືບໍ່ ປະຊາຊົນຢູ່ໃນເມືອງທີ່ບໍ່ມີກຳແພງ ຫລືຢູ່
ໃນປ້ອມ. [20]ໃຫ້ເບິ່ງວ່າເມືອງນີ້ອຸດົມສົມບູນ ຫລືແຫ້ງແລ້ງ ແລະມີປ່າໄມ້ຫລາຍບໍ? ຈົ່ງມີໃຈອົງ-
ອາດກ້າຫານ ແລະໃຫ້ນຳເອົາຜົນລະປູກບາງຢ່າງທີ່ເກີດຂຶ້ນຈາກບ່ອນນັ້ນມາ (ຍາມນັ້ນເປັນ
ຍາມທີ່ໝາກອະງຸ່ນກຳລັງສຸກ).
[21]ດັ່ງນັ້ນ ພວກນັກສືບຈຶ່ງໄດ້ເດີນທາງໄປຍັງເຂດເໜືອ ເພື່ອສຳຫລວດກວດເບິ່ງດິນແດນ
ຕັ້ງແຕ່ປ່າກັນດານຊິນ ທາງເຂດໃຕ້ຈົນຮອດທາງໄປສູ່ເຣໂຮບ ໃກ້ກັບຮາມັດ ຢູ່ທາງທິດເໜືອ.
[22]ພວກເຂົາພາກັນໄປທາງເຂດໃຕ້ກ່ອນ ແລ້ວມາທາງເຮັບໂຣນ ຊຶ່ງເປັນບ່ອນຢູ່ຂອງຊາວເຜົ່າ
ອາຮີມານ ເຜົ່າເຊຊາຍ ແລະເຜົ່າຕານມາຍ ພວກເຜົ່າເຫລົ່ານີ້ເປັນເຊື້ອສາຍຂອງຊົນຊາດຮູບ
ຮ່າງໃຫຍ່ ຄືພວກອານາກິມ (ເພິ່ນໄດ້ສ້າງເມືອງເຮັບໂຣນກ່ອນເມືອງໂຊອານທີ່ປະເທດເອຢິບ
ເຈັດປີ). [23]ພວກເຂົາໄດ້ເດີນທາງມາຮ່ອມເອັດຊະໂຄນ ຢູ່ທີ່ນີ້ ພວກເຂົາໄດ້ຕັດເອົາງ່າຕົ້ນອະ-

ງຸ່ນຊຶ່ງມີພວງດົກໜາ ຈົນມີສອງຄົນໃຊ້ໄມ້ຫາມ ພວກເຂົາຍັງໄດ້ນຳເອົາໝາກພີລາ ແລະໝາກ-
ເດື່ອມານຳ. [24](ບ່ອນນີ້ເອີ້ນຊື່ວ່າຮ່ອມເອັດຊະໂຄນ ຮ່ອມໝາກອະງຸ່ນ ເພາະວ່າພວກອິສຣາ-
ເອນໄດ້ຕັດເອົາພວງໝາກອະງຸ່ນຢູ່ບ່ອນນັ້ນ).

[25-26]ຫລັງຈາກສຳຫລວດກວດເບິ່ງດິນແດນໄດ້ສີ່ສິບມື້ແລ້ວ ພວກເຂົາກໍພາກັນກັບຄືນມາຫາ
ໂມເຊ ກັບອາໂຣນ ແລະພວກຊຸມນຸມຊົນອິສຣາເອນທີ່ກາເດັດ ໃນຖິ່ນກັນດານ ປາຣານ
ພວກເຂົາໄດ້ລາຍງານທຸກສິ່ງທີ່ໄດ້ເຫັນ ແລະໄດ້ເອົາໝາກໄມ້ທີ່ນຳມານັ້ນໃຫ້ທຸກຄົນເບິ່ງ.
[27]ພວກເຂົາບອກກັບໂມເຊວ່າ, “ພວກຂ້ານ້ອຍໄດ້ສຳຫລວດເບິ່ງພື້ນແຜ່ນດິນຕາມທີ່ໄດ້ສັ່ງໄປ
ນັ້ນແລ້ວ ດິນແດນແຫ່ງນີ້ຮັ່ງມີ ແລະອຸດົມສົມບູນຫລາຍ ແລະນີ້ເດ ໝາກໄມ້ບາງຊະນິດຈາກ
ປະເທດນັ້ນ. [28]ແຕ່ວ່າ ປະຊາຊົນຢູ່ບ່ອນນີ້ມີອຳນາດຫລາຍ ແລະຫົວເມືອງຕ່າງໆ ຂອງພວກ
ເຂົາກໍກວ້າງໃຫຍ່ໄພສານທັງມີກຳແພງປ້ອງກັນໄວ້ຢ່າງດີ ຍິ່ງໄປກວ່ານີ້ ພວກຂ້ານ້ອຍຍັງໄດ້
ເຫັນເຊື້ອສາຍຂອງອານາກ ຊຶ່ງເປັນຄົນມີຮູບຮ່າງໃຫຍ່ສູງ. [29]ສ່ວນອາມາເລັກກໍຢູ່ທາງເຂດ
ເບື້ອງໃຕ້ ແລະພວກຮິດຕີ ພວກເຢບຸດ ພວກອະໂມຣິດ ກໍຢູ່ເທິງພູນ້ອຍ ພວກການາອານຢູ່
ໃກ້ທະເລເມດີແຕຣາເນ ແລະຢູ່ຕາມຝັ່ງແມ່ນ້ຳຢໍແດນ.”

[30]ແລ້ວກາເລັບຈຶ່ງບອກໃຫ້ປະຊາຊົນທີ່ຮ້ອງທຸກຕໍ່ໂມເຊມິດງຽບ ແລະເວົ້າຕໍ່ໄປວ່າ, “ພວກ
ເຮົາມີກຳລັງພຽງພໍທີ່ຈະຊະນະໄດ້ ດັ່ງນັ້ນ ພວກເຮົາຕ້ອງເຂົ້າໂຈມຕີ ແລະຍຶດເອົາດິນແດນແຫ່ງ
ນີ້ດຽວນີ້.” [31]ແຕ່ວ່າ ພວກທີ່ໄປນຳກາເລັບໄດ້ເວົ້າວ່າ, “ບໍ່ໄດ້ ພວກເຮົາຍັງບໍ່ທັນມີກຳລັງພຽງພໍ
ທີ່ຈະໄປຕີ ເພາະວ່າປະຊາຊົນຢູ່ບ່ອນນັ້ນມີກຳລັງຫລາຍກວ່າພວກເຮົາ.” [32]ພວກເຂົາໄດ້ລາຍ
ງານຄວາມບໍ່ຈິງກ່ຽວກັບແຜ່ນດິນທີ່ໄດ້ໄປສຳຫລວດມາຕໍ່ພວກອິສຣາເອນ ໂດຍພວກເຂົາເວົ້າວ່າ,
“ດິນແດນແຫ່ງນັ້ນບໍ່ມີພືດພົນຢ່າງໃດພໍທີ່ຈະລ້ຽງຝູງຄົນທີ່ນັ້ນໄດ້ ທຸກຄົນທີ່ພວກເຮົາໄດ້ພົບເຫັນ
ເປັນຄົນສູງໃຫຍ່ ທີ່ເປັນເຊື້ອສາຍຂອງອານາກ. [33]ພວກເຂົາຫລຽວເບິ່ງພວກເຮົາຄືກັບຝູງຕັກ-
ແຕນໂຕນ້ອຍໆ ເທົ່ານັ້ນ ແລະກໍເປັນດັ່ງນັ້ນໃນສາຍຕາຂອງພວກເຮົາດ້ວຍ.”

# ບົດທີ 14

## ປະຊາຊົນຮ້ອງທຸກ

[1]ປະຊາຊົນຮ້ອງທຸກດ້ວຍຄວາມໂສກເສົ້າຕະຫລອດຄືນ [2]ພວກເຂົາຈົ່ມທຸກຕໍ່ໂມເຊ ແລະອາ-
ໂຣນວ່າ, “ຖ້າຕາຍຢູ່ໃນປະເທດເອຢິບ ຫລືແມ່ນວ່າຕາຍຢູ່ໃນຖິ່ນກັນດານນີ້ກໍຍັງດີກວ່າ. [3]ເຫດ
ໃດ ພຣະຜູ້ເປັນເຈົ້າຈຶ່ງນຳພວກເຮົາໄປສູ່ດິນແດນແຫ່ງນັ້ນ ພວກເຮົາຈະຖືກຂ້າຕາຍໃນສະ-
ໜາມຮົບ ແລະລູກເມຍກໍຈະຖືກຈັບໄປ ສະນັ້ນ ກັບຄືນເມືອປະເທດເອຢິບຈະບໍ່ດີກວ່າບໍ?
[4]ດັ່ງນັ້ນ ພວກເຂົາຈຶ່ງເວົ້າກັນວ່າ, “ຂໍໃຫ້ພວກເຮົາເລືອກເອົາຜູ້ນຳຄົນໜຶ່ງແລ້ວກັບຄືນເມືອປະ-
ເທດເອຢິບເທາະ.”

[5]ແຕ່ແລ້ວ ໂມເຊກັບອາໂຣນ ໄດ້ກົ້ມໜ້າໝູບລົງຕໍ່ປະຊາຊົນທຸກຄົນ. [6]ສ່ວນໂຢຊວຍລູກ
ຊາຍຂອງນູນ ແລະກາເລັບລູກຊາຍຂອງ ເຢຟຸນເນ ສອງຄົນໃນຈຳນວນນັກສືບໄດ້ພາກັນຈີກ
ເສື້ອຜ້າຂອງຕົນດ້ວຍຄວາມເສຍໃຈ ແລ້ວເວົ້າຕໍ່ປະຊາຊົນວ່າ, [7]“ປະເທດທີ່ພວກຂ້າພະເຈົ້າໄດ້

ໄປສຳຫລວດກວດເບິ່ງນັ້ນ ເປັນ ແຜ່ນດິນທີ່ດີເລີດ. 8ຖ້າວ່າ ພຣະຜູ້ເປັນເຈົ້າ ຊົງພໍພຣະໄທໃນ
ພວກເຮົາ ພຣະອົງກໍຈະຊົງນຳພວກເຮົາໄປສູ່ແຜ່ນດິນທີ່ຮັ່ງມີ ແລະອຸດົມສົມບູນນີ້. 9ແຕ່ຂໍສິ່ງ
ດຽວຄື ຢ່າກະບົດຕໍ່ສູ້ພຣະຜູ້ເປັນເຈົ້າ ເລີຍ ແລະຢ່າຢ້ານປະຊາຊົນທີ່ຢູ່ໃນແຖບນັ້ນ ພວກເຮົາ
ຈະຊະນະພວກເຂົາຢ່າງງ່າຍດາຍ ພຣະຜູ້ເປັນເຈົ້າ ຊົງທຳລາຍຮູບພະທີ່ປົກປ້ອງພວກເຂົານັ້ນ
ສູນສິ້ນໄປໝົດແລ້ວ ຢ່າຢ້ານຫຍັງເລີຍ ເພາະວ່າພຣະອົງສະຖິດຢູ່ນຳພວກເຮົາ.”

10ແຕ່ພວກຊຸມນຸມທັງໝົດໄດ້ວາງ ແຜນຂວ່າງກ້ອນຫີນໃສ່ ໂມເຊ ແລະ ອາໂຣນ ໃຫ້ຕາຍ ໃນ
ທັນໃດນັ້ນ ປະຊາຊົນໄດ້ເຫັນແປວໄຟ ຊຶ່ງສະແດງເຖິງລັດສະໝີຂອງ ພຣະຜູ້ເປັນເຈົ້າ ປະກົດ
ຂຶ້ນເທິງຫໍເຕັນສັກສິດ.

## ໂມເຊອ້ອນວອນເພື່ອປະຊາຊົນ

11ພຣະຜູ້ເປັນເຈົ້າ ຊົງກ່າວຕໍ່ ໂມເຊວ່າ, “ເຖິງ ແມ່ນວ່າເຮົາໄດ້ເຮັດການອັດສະຈັນຫລາຍຢ່າງ
ທ່າມກາງພວກເຂົາມາແລ້ວກໍຕາມ ປະຊາຊົນ ເຫລົ່ານີ້ກໍຍັງຈະໝິ່ນປະໝາດ ແລະປະຕິເສດບໍ່
ຍອມເຊື່ອຟັງເຮົາອີກຢູ່. 12ດັ່ງນັ້ນແຫລະ ເຮົາຈະສົ່ງໂຣກລະບາດມາທຳລາຍພວກເຂົາ ແຕ່ເຮົາ
ຈະເຮັດໃຫ້ເຈົ້າເປັນຊົນຊາດທີ່ຍິ່ງໃຫຍ່ ແລະມີອຳນາດກວ່າພວກເຂົາອີກ.

13ແຕ່ ໂມເຊ ທູນຕໍ່ ພຣະຜູ້ເປັນເຈົ້າ ວ່າ, “ດ້ວຍອຳນາດຂອງພຣະອົງ ຊົງ ນຳພວກປະຊາຊົນ
ເຫລົ່ານີ້ອອກຈາກປະເທດ ເອຢິບ ເມື່ອພວກ ເອຢິບ ຮູ້ຈັກສິ່ງທີ່ພຣະອົງ ໄດ້ຊົງກະທຳຕໍ່ໄພ່ພົນ
ຂອງພຣະອົງ. 14ພວກເຂົາກໍຈະ ເລົ່າໃຫ້ປະຊາຊົນ ໃນ ແຖບນັ້ນຟັງ ແລະພວກເຂົາກໍຈະ ໄດ້ຍິນ
ແລ້ວວ່າ ພຣະອົງຊົງ ເປັນ ພຣະຜູ້ເປັນເຈົ້າ ຜູ້ຊົງສະຖິດຢູ່ກັບພວກຂ້ານ້ອຍຄື ພວກຂ້ານ້ອຍໄດ້
ເຫັນກ້ອນເມກຂອງພຣະອົງ ພຣະອົງຊົງນຳໜ້າພວກຂ້ານ້ອຍອອກກ່ອນ ດ້ວຍເສົາເມກໃນຍາມ
ກາງເວັນ ແລະ ເສົາໄຟໃນຍາມກາງຄືນ. 15ດຽວນີ້ ຖ້າພຣະອົງຈະຊົງຂ້າໄພ່ພົນທັງໝົດຂອງ
ພຣະອົງ ຊົນຊາດຕ່າງໆ ທີ່ໄດ້ຍິນຊື່ສຽງລຽງນາມຂອງພຣະອົງກໍຈະພາກັນປະນາມວ່າ,
16ພຣະອົງຊົງຂ້າໄພ່ພົນຂອງພຣະອົງໃນຖິ່ນກັນດານ ເພາະພຣະອົງຂາດຄວາມສາມາດທີ່ຈະນຳ
ພວກເຂົາໄປເຖິງແຜ່ນດິນທີ່ພຣະອົງຊົງສັນຍາວ່າຈະໃຫ້ພວກເຂົານັ້ນ. 17ຂ້າແດ່ ພຣະຜູ້ເປັນເຈົ້າ
ດ້ວຍເຫດນີ້ແຫລະ ຂ້ານ້ອຍຈຶ່ງອ້ອນວອນຕໍ່ພຣະອົງ ຂໍຊົງສະແດງລິດອຳນາດຂອງພຣະອົງໃຫ້
ພວກຂ້ານ້ອຍໄດ້ເຫັນ ແລະເຮັດຕາມທີ່ພຣະອົງໄດ້ຊົງສັນຍາໄວ້ໂດຍໄດ້ຊົງກ່າວໄວ້ວ່າ, 18“ເຮົາ
ເປັນຜູ້ມີຄວາມອົດກັ້ນ ເຮົາມີຄວາມຮັກອັນຍິ່ງໃຫຍ່ ມີຄວາມເມດຕາ ໃຫ້ການອະໄພໂທດ ແລະ
ໃຫ້ອະໄພການທໍລະຍົດ ແຕ່ເຮົາຈະລົງໂທດລູກຫລານສືບໆ ໄປສາມສີ່ຊົ່ວອາຍຸຄົນ ຍ້ອນ
ຄວາມບາບທີ່ຕົກທອດມາຈາກພໍ່ແມ່ຂອງພວກເຂົາ.” 19ຂ້ານ້ອຍອ້ອນວອນຂໍຕໍ່ພຣະອົງ ໂຜດໃຫ້
ອະໄພໂທດປະຊາຊົນເຫລົ່ານີ້ ດ້ວຍຄວາມຮັກອັນຍິ່ງໃຫຍ່ທີ່ບໍ່ປ່ຽນແປງຂອງພຣະອົງ ເໝືອນດັ່ງ
ພຣະອົງໄດ້ຊົງໃຫ້ອະໄພພວກເຂົາໃນຄາວທີ່ພວກເຂົາອອກມາຈາກປະເທດ ເອຢິບ.”

20ພຣະຜູ້ເປັນເຈົ້າ ຊົງ ຕອບວ່າ, “ເຮົາຈະ ໃຫ້ອະໄພ ແກ່ພວກ ເຂົາຕາມຄຳຂໍຮ້ອງ ຂອງ ເຈົ້າ.
21ແຕ່ເຮົາຂໍສັນຍາວ່າ ເຮົາມີຊີວິດຢູ່ຢ່າງແນ່ນອນ ແລະດ້ວຍລັດສະໝີຄວາມຍິ່ງໃຫຍ່ຂອງເຮົາ
ເຕັມຢູ່ທົ່ວໂລກນີ້. 22ເຮົາຈຶ່ງຈະບໍ່ໃຫ້ໃຜໃນຈຳນວນປະຊາຊົນ ເຫລົ່ານີ້ ເຂົ້າໄປໃນ ແຜນດິນນັ້ນ
ພວກເຂົາໄດ້ເຫັນລັດສະໝີຂອງເຮົາ ແລະໄດ້ເຫັນການອັດສະຈັນທີ່ເຮົາໄດ້ເຮັດຢູ່ໃນປະເທດ ເອ-

ຢືບ ແລະໃນຖິ່ນແຫ້ງແລ້ງກັນດານນັ້ນ ແຕ່ພວກເຂົາໄດ້ທົດລອງຄວາມອົດທົນພະຍາຍາມຂອງ
ເຮົາຫລາຍເທື່ອ ທັງປະຕິເສດບໍ່ຍອມຟັງຄວາມເຮົາ. 23ພວກເຂົາຈະບໍ່ໄດ້ເຂົ້າໄປໃນແຜ່ນດິນທີ່
ເຮົາໄດ້ສັນຍາໄວ້ກັບພວກບັນພະບູລຸດຂອງພວກເຂົາ ຜູ້ທີ່ໝິ່ນປະໝາດເຮົາ ຈະບໍ່ມີໃຜໄດ້ເຂົ້າ
ໄປໃນແຜ່ນດິນນັ້ນ. 24ແຕ່ວ່າ ຍ້ອນ ກາເລັບ ຜູ້ຮັບໃຊ້ຂອງເຮົາມີຈິດໃຈແຕກຕ່າງຄົນອື່ນ ແລະ
ຍັງຄົງສັດຊື່ຕໍ່ເຮົາຢູ່ ເຮົາຈຶ່ງຈະນຳລາວເຂົ້າໄປໃນແຜ່ນດິນທີ່ລາວໄດ້ໄປສຳຫລວດມາແລ້ວນັ້ນ
ແລະເຊື້ອສາຍຂອງລາວຈະມີສິດເປັນເຈົ້າຂອງແຜ່ນດິນນັ້ນ. 25ຄືໃນຮ່ອມພູບ່ອນທີ່ຊາວ ອາມາ-
ເລັກ ແລະຊາວ ການາອານ ອາໃສຢູ່ໃນປະຈຸບັນນີ້ ດັ່ງນັ້ນ ໃນມື້ອື່ນຈົ່ງກັບຄືນເມືອຫາຖິ່ນແຫ້ງ-
ແລ້ງກັນດານຕາມເສັ້ນທາງສູ່ທະເລແດງ.

## ພຣະຜູ້ເປັນເຈົ້າຊົງລົງໂທດ
## ໄພ່ພົນຂອງພຣະອົງຍ້ອນການຈົ່ມທຸກ

26-27ແລ້ວ ພຣະຜູ້ເປັນເຈົ້າ ໄດ້ກ່າວກັບ ໂມເຊ ແລະ ອາໂຣນ ວ່າ, “ຍັງດົນປານໃດ ພວກປະ-
ຊາຊົນທີ່ຊົ່ວຊ້າພວກນີ້ຈະເຊົາຈົ່ມທຸກຕໍ່ເຮົາ ການຈົ່ມທຸກນີ້ມັນລົ້ນຫູເຮົາແລ້ວ. 28ໃຫ້ເຈົ້າຕອບ
ພວກເຂົາດັ່ງນີ້ເດີ້ ເຮົາມີຊີວິດຢູ່ສັນໃດ ເຮົາຂໍສາບານວ່າ ເຮົາຈະປະຕິບັດຕາມຄຳຈົ່ມທຸກຕໍ່ເຮົາ
ສັນນັ້ນ ເຮົາຄື ພຣະຜູ້ເປັນເຈົ້າ ໄດ້ກ່າວດັ່ງນີ້. 29ພວກເຈົ້າຈະຕາຍ ແລະຊາກສົບຂອງພວກເຈົ້າ
ຈະກະຈັດກະຈາຍໄປທົ່ວຖິ່ນແຫ້ງແລ້ງກັນດານນີ້ ກໍຍ້ອນວ່າພວກເຈົ້າຈົ່ມທຸກໃສ່ເຮົາ ໃນຈຳ-
ນວນພວກເຈົ້ານັບຕັ້ງແຕ່ອາຍຸຊາວປີຂຶ້ນໄປ ຈະບໍ່ມີໃຜໄດ້ເຂົ້າໄປໃນແຜ່ນດິນນັ້ນ. 30ເຮົາໄດ້
ສັນຍາໄວ້ວ່າຈະພາພວກເຈົ້າໄປໃນບ່ອນນັ້ນ ແຕ່ບໍ່ມີໃຜຈະໄດ້ໄປນອກຈາກ ກາເລັບ ແລະ ໂຢ-
ຊວຍ ເທົ່ານັ້ນ. 31ພວກເຈົ້າໄດ້ພາກັນເວົ້າວ່າ ພວກລູກຫລານຂອງພວກເຈົ້າຈະຕ້ອງຖືກຈັບ ແຕ່
ວ່າ ເຮົາຈະນຳພວກເຈົ້າໄປຍັງແຜ່ນດິນບ່ອນທີ່ພວກເຈົ້າບໍ່ຍອມໄປນັ້ນ ຊຶ່ງບ່ອນນັ້ນຈະເປັນບ້ານ
ເມືອງຂອງພວກເຂົາ. 32ແຕ່ສ່ວນພວກເຈົ້າ ຊາກສົບຂອງພວກເຈົ້າຈະຖືກປະຖິ້ມໃນຖິ່ນແຫ້ງ-
ແລ້ງກັນດານນີ້. 33ແລະພວກລູກຂອງພວກເຈົ້າ ຈະເປັນຜູ້ລ້ຽງແກະໃນຖິ່ນແຫ້ງແລ້ງກັນດານນີ້
ເປັນເວລາສີ່ສິບປີ ພວກເຂົາຈະທຸກຍາກລຳບາກຈົນກວ່າຊາກສົບຂອງພວກເຈົ້າຈະເປື່ອຍເໜົ່າ
ໄປ. 34ຍ້ອນວ່າພວກເຈົ້າບໍ່ສັດຊື່ ພວກເຈົ້າໄດ້ໄປສຳຫລວດເບິ່ງແຜ່ນດິນເປັນເວລາສີ່ສິບມື້ ສະ-
ນັ້ນ ເຮົາຈະລົງໂທດເຈົ້າເປັນເວລາສີ່ສິບປີຍ້ອນພວກເຈົ້າບໍ່ເຊື່ອຟັງເຮົາ ແລ້ວພວກເຈົ້າຈຶ່ງຈະຮູ້
ວ່າ ຄວາມບໍ່ພໍໃຈຂອງເຮົາມີຄວາມໝາຍເທົ່າໃດ. 35ເຮົາຂໍສາບານວ່າ ເຮົາຈະປະຕິບັດດັ່ງນີ້ຕໍ່
ພວກຄົນຊົ່ວຊ້າທີ່ຮ່ວມໃຈກັນຕໍ່ສູ້ເຮົາ ພວກເຈົ້າທຸກຄົນຈະຕ້ອງຕາຍຢູ່ໃນຖິ່ນແຫ້ງແລ້ງກັນດານ
ນີ້ ເຮົາຄື ພຣະຜູ້ເປັນເຈົ້າ ໄດ້ກ່າວດັ່ງນີ້ແຫລະ.”

36-37ພວກທີ່ ໂມເຊ ສົ່ງໄປສຳຫລວດເບິ່ງແຜ່ນດິນແລ້ວ ກັບມາລາຍງານຂ່າວ ຊຶ່ງເປັນເຫດໃຫ້
ປະຊາຊົນຈົ່ມທຸກໃສ່ ພຣະຜູ້ເປັນເຈົ້າ ນັ້ນ ພຣະອົງໄດ້ຊົງເຮັດໃຫ້ພວກເຂົາຕາຍຍ້ອນໂຣກໄພໄຂ້
ເຈັບ. 38ດັ່ງນັ້ນ ໃນຈຳນວນນັກສືບສິບສອງຄົນ ຈຶ່ງມີແຕ່ ໂຢຊວຍ ແລະ ກາເລັບ ເທົ່ານັ້ນ ທີ່ຍັງມີ
ຊີວິດເຫລືອຢູ່.

## ປະເທດການາອານຖືກໂຈມຕີເທື່ອທຳອິດ

39ເມື່ອ ໂມເຊ ໄດ້ບອກພວກ ອິສຣາເອນ ກ່ຽວກັບຖ້ອຍຄຳທີ່ ພຣະຜູ້ເປັນເຈົ້າ ຊົງກ່າວນັ້ນ

ພວກເຂົາກໍພາກັນເສົ້າໂສກເສຍໃຈຫລາຍ.
40ດັ່ງນັ້ນ ໃນເວລາຮຸ່ງເຊົ້າຂອງມື້ໃໝ່ ພວກອິສຣາເອນກໍອອກໄປຕິເສີກທາງພູນ້ອຍ ແລະ
ເວົ້າວ່າ, "ດຽວນີ້ ພວກຂ້ານ້ອຍພ້ອມທີ່ຈະໄປຍັງບ່ອນທີ່ພຣະຜູ້ເປັນເຈົ້າຊົງບອກນັ້ນ ພວກຂ້າ-
ນ້ອຍຍອມຮັບວ່າຕົນເອງເປັນຄົນບາບແທ້." 41ແຕ່ໂມເຊບອກວ່າ, "ເປັນຫຍັງພວກເຈົ້າຈຶ່ງບໍ່ຟັງ
ຄວາມພຣະຜູ້ເປັນເຈົ້າ. 42ພວກເຈົ້າຈະບໍ່ມີຜົນສຳເລັດດອກ ບໍ່ຕ້ອງໄປ ເພາະວ່າພຣະຜູ້ເປັນ-
ເຈົ້າບໍ່ສະຖິດຢູ່ກັບພວກເຈົ້າ. 43ສັດຕູຈະຊະນະພວກເຈົ້າ ຍ້ອນວ່າພວກເຈົ້າບໍ່ຍອມຕິດຕາມ
ພຣະຜູ້ເປັນເຈົ້າ ພຣະອົງຈຶ່ງບໍ່ຊົງສະຖິດຢູ່ກັບພວກເຈົ້າ ເມື່ອພວກເຈົ້າໄປປະເຊີນໜ້າກັບພວກ
ອາມາເລັກ ແລະພວກການາອານໃນສະໜາມຮົບ ພວກເຈົ້າຈະຕ້ອງຖືກຂ້າຕາຍ."
44ແຕ່ພວກເຂົາກໍຍັງບັງອາດຂຶ້ນໄປຍັງພູນ້ອຍນັ້ນ ທັງໆ ທີ່ຫີບຄຳໝັ້ນສັນຍາຂອງພຣະຜູ້-
ເປັນເຈົ້າ ແລະໂມເຊບໍ່ໄດ້ອອກໄປຈາກຄ້າຍເລີຍ. 45ພວກອາມາເລັກແລະພວກການາອານ
ທີ່ຢູ່ໃນບ່ອນນັ້ນກໍລົງມາໂຈມຕີ ແລະຊະນະພວກເຂົາພ້ອມທັງໄລ່ຕິດຕາມພວກເຂົາອອກໄປໄກ
ທີ່ສຸດຈົນເຖິງເມືອງໂຮມາ.

# ບົດທີ 15

## ຄຳສັ່ງສອນເລື່ອງການຖວາຍເຄື່ອງບູຊາ

1ພຣະຜູ້ເປັນເຈົ້າກ່າວກັບໂມເຊວ່າ 2"ຈົ່ງກ່າວແກ່ລູກຫລານອິສຣາເອນວ່າ ເມື່ອພວກເຈົ້າ
ຈະເຂົ້າໃນແຜ່ນດິນທີ່ເຈົ້າຈະເຂົ້າໄປອາໄສຢູ່ ຊຶ່ງເຮົາໃຫ້ແກ່ເຈົ້ານັ້ນ 3ຖ້າຜູ້ໃດຈະນຳເຄື່ອງບູຊາ
ຈາກຝູງງົວ ຫລືຈາກຝູງແບ້ແກະໄປຖວາຍພຣະຜູ້ເປັນເຈົ້າເປັນເຄື່ອງບູຊາ ດ້ວຍໄຟ ຄືເຄື່ອງ
ເຜົາບູຊາ ຫລືເຄື່ອງສັດບູຊາເຮັດຕາມຄຳປະຕິຍານ ຫລືເປັນເຄື່ອງບູຊາດ້ວຍ ໃຈສະໝັກ ຫລື
ໃນການກິນລ້ຽງຕາມກຳນົດ ຈຶ່ງເຮັດໃຫ້ມີກິ່ນທີ່ພໍພຣະໄທແກ່ພຣະຜູ້ເປັນເຈົ້າ 4ກໍໃຫ້ຜູ້ທີ່ນຳ
ເຄື່ອງບູຊານັ້ນນຳເຄື່ອງບູຊາພືດຜົນເປັນເມັດຖວາຍແກ່ພຣະຜູ້ເປັນເຈົ້າຄືຍອດແປ້ງໜຶ່ງໃນສິບ
ເອຟານວດກັບນ້ຳມັນໜຶ່ງໃນສີ່ຮິນ 5ແລະເຈົ້າຈົ່ງຈັດນ້ຳອະງຸ່ນໜຶ່ງໃນສີ່ຮິນສຳລັບລູກແກະທຸກໂຕ
ເປັນເຄື່ອງດື່ມບູຊາຄູ່ກັບເຄື່ອງ ເຜົາບູຊາຄູ່ກັບເຄື່ອງສັດບູຊາ 6ຫລືສຳລັບແກະຜູ້ໂຕໜຶ່ງເຈົ້າຈົ່ງ
ຈັດເຄື່ອງບູຊາພືດຜົນເປັນເມັດດ້ວຍຍອດແປ້ງສອງໃນສິບເອຟານວດກັບ ນ້ຳມັນໜຶ່ງໃນສາມຮິນ
7ແລະສຳລັບເປັນເຄື່ອງດື່ມບູຊາ ເຈົ້າຈົ່ງຖວາຍນ້ຳອະງຸ່ນໜຶ່ງໃນສາມຮິນໃຫ້ເປັນກິ່ນທີ່ພໍພຣະໄທ
ແກ່ພຣະຜູ້ເປັນເຈົ້າ 8ເມື່ອເຈົ້າຈັດງົວເຖິກເປັນເຄື່ອງເຜົາບູຊາ ຫລືເປັນເຄື່ອງສັດບູຊາຕາມຄຳ
ປະຕິຍານ ຫລືໃຫ້ເປັນເຄື່ອງບູຊາເພື່ອຄວາມສາມັກຄີທຳແກ່ພຣະຜູ້ເປັນເຈົ້າ 9ກໍໃຫ້ນຳບູຊາພືດ
ຜົນເປັນເມັດມີຍອດແປ້ງສາມໃນສິບເອຟານວດກັບນ້ຳມັນເຄິ່ງຮິນມາບູຊາພ້ອມກັບງົວເຖິກນັ້ນ
10ແລະໃຫ້ນຳເຄື່ອງດື່ມບູຊາ ມີນ້ຳອະງຸ່ນເຄິ່ງຮິນໃຫ້ເປັນການບູຊາດ້ວຍໄຟ ເປັນກິ່ນທີ່ພໍພຣະໄທ
ແກ່ພຣະຜູ້ເປັນເຈົ້າ 11ຈົ່ງເຮັດຢ່າງນີ້ສຳລັບງົວເຖິກ ຫລືແກະຜູ້ທຸກໂຕ ຫລືສຳລັບລູກແກະ ຫລື
ລູກແບ້ທຸກໂຕ 12ຕາມຈຳນວນສັດທີ່ຈັດມາ ຈົ່ງປະຕິບັດຕາມສ່ວນນີ້ແກ່ສັດທຸກໆໂຕ
13ບັນດາຊາວພື້ນເມືອງຕ້ອງເຮັດຢ່າງນີ້ທຸກຄົນ ເມື່ອຈະຖວາຍເຄື່ອງບູຊາດ້ວຍໄຟ ໃຫ້ເປັນ
ກິ່ນທີ່ພໍພຣະໄທແກ່ພຣະຜູ້ເປັນເຈົ້າ 14ຖ້າຄົນຕ່າງດ້າວທີ່ມາອາໄສຢູ່ກັບເຈົ້າ ຫລືຄົນໜຶ່ງຄົນໃດ

ທ່າມກາງເຈົ້າຕະຫລອດຊົ່ວອາຍຸຂອງເຈົ້າ ຈະຖວາຍເຄື່ອງບູຊາດ້ວຍໄຟ ໃຫ້ເປັນກິ່ນທີ່ພໍພຣະ-
ໄທແກ່ພຣະຜູ້ເປັນເຈົ້າ ກໍໃຫ້ພວກເຂົາເຮັດຄືກັບທີ່ພວກເຈົ້າໄດ້ເຮັດນັ້ນ 15ຈະຕ້ອງມີກົດເກນ
ຢ່າງດຽວກັນສຳລັບຊຸມນຸມຊົນ ແລະສຳລັບຄົນຕ່າງດ້າວຜູ້ທີ່ມາອາໄສຢູ່ກັບເຈົ້າ ເປັນກົດຖາ-
ວອນຕະຫລອດຊົ່ວອາຍຸຂອງເຈົ້າ ຄືເຈົ້າເປັນຢ່າງໃດ ຄົນຕ່າງດ້າວກໍເປັນຢ່າງນັ້ນຕໍ່ພຣະພັກ
ພຣະຜູ້ເປັນເຈົ້າ 16ຈະຕ້ອງມີບັນຍັດຢ່າງດຽວກັນ ແລະຄຳຕັດສິນຢ່າງດຽວກັນສຳລັບເຈົ້າ ແລະ
ສຳລັບຄົນຕ່າງດ້າວທີ່ມາອາໄສຢູ່ກັບເຈົ້າ”

17ພຣະຜູ້ເປັນເຈົ້າຊົງກ່າວກັບໂມເຊວ່າ 18“ຈົ່ງກ່າວແກ່ລູກຫລານອິສຣາເອນວ່າ ເມື່ອພວກ
ເຈົ້າມາເຖິງແຜ່ນດິນທີ່ເຮົາຈະພາເຈົ້າໄປ 19ແລະເມື່ອເຈົ້າຈະຮັບປະທານອາຫານຈາກແຜ່ນດິນ
ນັ້ນ ເຈົ້າຈົ່ງນຳເຄື່ອງບູຊາຖວາຍແກ່ພຣະຜູ້ເປັນເຈົ້າ 20ຈົ່ງເອົາແປ້ງປຽກຜົນແຮກເຮັດຂະໜົມ
ກ້ອນໜຶ່ງຖວາຍເປັນເຄື່ອງບູຊາ ເປັນເຄື່ອງບູຊາທີ່ໄດ້ຈາກລານນວດເຂົ້າ ເຈົ້າຈົ່ງຖວາຍດັ່ງທີ່
ເວົ້ານີ້ 21ຈົ່ງເອົາແປ້ງປຽກຜົນແຮກຖວາຍເປັນເຄື່ອງບູຊາແກ່ພຣະຜູ້ເປັນເຈົ້າຕະຫລອດຊົ່ວອາຍຸ
ຂອງເຈົ້າ

22ຖ້າພວກເຈົ້າໄດ້ປະພຶດຜິດ ບໍ່ໄດ້ຮັກສາພຣະບັນຍັດເຫລົ່ານີ້ຈັກປະການ ຊຶ່ງພຣະຜູ້ເປັນ-
ເຈົ້າກ່າວສັ່ງແກ່ໂມເຊ 23ທຸກປະການຊຶ່ງພຣະຜູ້ເປັນເຈົ້າຊົງສັ່ງໄວ້ທາງໂມເຊ ຕັ້ງແຕ່ມື້ທີ່ພຣະ-
ຜູ້ເປັນເຈົ້າປະທານພຣະຄຳສັ່ງແກ່ໂມເຊ ແລະຕໍ່ໆໄປຕະຫລອດຊົ່ວອາຍຸຂອງເຈົ້າ 24ແລ້ວຖ້າ
ປະຊາຊົນໄດ້ເຮັດຜິດໂດຍບໍ່ເຈດຕະນາ ໂດຍທີ່ຊຸມນຸມຊົນບໍ່ຮູ້ເຫັນ ຊຸມນຸມຊົນທັງໝົດຕ້ອງ
ຖວາຍງົວໜຸ່ມໂຕໜຶ່ງເປັນເຄື່ອງເຜົາບູຊາ ໃຫ້ເປັນກິ່ນທີ່ພໍພຣະໄທແກ່ພຣະຜູ້ເປັນເຈົ້າພ້ອມກັບ
ເຄື່ອງບູຊາພືດຜົນເປັນເມັດ ແລະເຄື່ອງດື່ມບູຊາຄູ່ກັນຕາມລະບຽບ ແລະຖວາຍລູກແບ້ຜູ້ໂຕໜຶ່ງ
ເປັນເຄື່ອງບູຊາໄຖ່ບາບ 25ແລະໃຫ້ປະໂລຫິດເຮັດການລຶບລ້າງມົນທິນບາບໃຫ້ແກ່ຊຸມນຸມຊົນອິ-
ສຣາເອນທັງໝົດ ແລະພວກເຂົາຈະໄດ້ຮັບອະໄພໂທດ ເພາະເປັນການຜິດໂດຍບໍ່ເຈດຕະນາ
ແລະລາວຈະນຳເຄື່ອງບູຊາຂອງພວກເຂົາມາຖວາຍດ້ວຍໄຟແກ່ພຣະຜູ້ເປັນເຈົ້າ ແລະຖວາຍ
ເຄື່ອງບູຊາໄຖ່ບາບຕໍ່ພຣະພັກພຣະຜູ້ເປັນເຈົ້າ ເພາະຄວາມຜິດໂດຍບໍ່ເຈດຕະນາຂອງພວກເຂົາ
26ແລະຊຸມນຸມຊົນອິສຣາເອນທັງໝົດຈະໄດ້ຮັບອະໄພໂທດ ພ້ອມກັບຄົນຕ່າງດ້າວຜູ້ຢູ່ທ່າມກາງ
ພວກເຂົາ ເພາະວ່າພົນລະເມືອງທັງໝົດກໍກ່ຽວພັນກັບຄວາມຜິດນັ້ນ ອັນເກີດຂຶ້ນໂດຍບໍ່ເຈດຕະ-
ນາ

27ຖ້າບຸກຄົນໜຶ່ງຄົນໃດເຮັດຜິດໂດຍບໍ່ຮູ້ຕົວ ກໍໃຫ້ຜູ້ນັ້ນເອົາແບ້ແມ່ອາຍຸປີໜຶ່ງໄປເປັນເຄື່ອງບູ-
ຊາໄຖ່ບາບ 28ແລະໃຫ້ປະໂລຫິດເຮັດການລຶບລ້າງມົນທິນບາບຕໍ່ພຣະພັກພຣະຜູ້ເປັນເຈົ້າໃຫ້
ບຸກຄົນນັ້ນ ເມື່ອລາວເຮັດບາບໂດຍບໍ່ຮູ້ຕົວ ເພື່ອເຮັດການລຶບລ້າງມົນທິນບາບຂອງລາວ ແລະ
ລາວຈະໄດ້ຮັບອະໄພໂທດ 29ໃຫ້ເຈົ້າມີກົດຢ່າງດຽວສຳລັບຜູ້ເຮັດຜິດໂດຍບໍ່ຮູ້ຕົວຄືລູກຫລານອິ-
ສຣາເອນຜູ້ເປັນຊາວພື້ນເມືອງ ແລະຄົນຕ່າງດ້າວທີ່ຢູ່ທ່າມກາງພວກເຂົາດ້ວຍ.

30ແຕ່ບຸກຄົນໃດທີ່ບັງອາດເຮັດຜິດ ລາວເປັນຄົນພື້ນເມືອງ ຫລືຄົນຕ່າງດ້າວກໍດີ ຜູ້ນັ້ນໄດ້
ໝິ່ນປະໝາດພຣະຜູ້ເປັນເຈົ້າ ໃຫ້ຕັດຜູ້ນັ້ນອອກຈາກຊົນຊາດຂອງຕົນ 31ເພາະລາວໄດ້ໝິ່ນ-
ປະໝາດພຣະຄຳສັ່ງຂອງພຣະຜູ້ເປັນເຈົ້າ ແລະຂັດຂືນພຣະບັນຍັດຂອງພຣະອົງ ໃຫ້ຕັດຜູ້ນັ້ນ

ອອກ ໃຫ້ລາວຮັບໂທດຕາມຄວາມຊົ່ວຊ້າຂອງຕົນ"
[32]ຂະນະເມື່ອລູກຫລານ ອິສຣາເອນ ຢູ່ໃນຖິ່ນແຫ້ງແລ້ງກັນດານ ພວກເຂົາພົບຄົນໜຶ່ງໄປເກັບ
ຟືນໃນວັນສະບາໂຕ [33]ຜູ້ທີ່ພົບລາວເກັບຟືນກໍພາລາວມາຫາ ໂມເຊ ແລະ ອາໂຣນ ແລະມາຫາ
ຊຸມນຸມຊົນທັງໝົດ [34]ພວກເຂົາຈຶ່ງຈັບຄົນນັ້ນໄວ້ ເພາະຍັງບໍ່ແຈ້ງວ່າຈະເຮັດຢ່າງໃດແກ່ລາວ
[35]ແລະ ພຣະຜູ້ເປັນເຈົ້າ ກ່າວກັບ ໂມເຊ ວ່າ "ຊາຍຜູ້ນັ້ນຕ້ອງເຖິງຕາຍ ຊຸມນຸມຊົນທັງໝົດຕ້ອງ
ເອົາຫີນຂວ້າງລາວຢູ່ນອກຄ້າຍ" [36]ແລະຊຸມນຸມຊົນທັງໝົດຈຶ່ງພາລາວອອກມານອກຄ້າຍ ແລະ
ເອົາຫີນຂວ້າງລາວຈົນຕາຍ ຕາມທີ່ ພຣະຜູ້ເປັນເຈົ້າ ຊົງສັ່ງ ໂມເຊ

## ພຣະເຈົ້າຊົງພິພາກສາຄົນທີ່ບໍ່ຮັກສາວັນສະບາໂຕ

[37]ພຣະຜູ້ເປັນເຈົ້າ ກ່າວກັບ ໂມເຊ ວ່າ [38]"ຈົ່ງເວົ້າກັບລູກຫລານ ອິສຣາເອນ ແລະສັ່ງພວກເຂົາ
ໃຫ້ເຮັດຍອຍເສື້ອຕາມມຸມແຈເສື້ອຕະຫລອດຊົ່ວອາຍຸຂອງພວກເຂົາ ໃຫ້ເອົາດ້າຍສີຟ້າຜູກຕິດທີ່
ມຸມແຈທຸກມຸມ [39]ເພື່ອເຈົ້າຈະເບິ່ງຍອຍເສື້ອນັ້ນ ແລະຈົດຈຳພຣະບັນຍັດທັງໝົດຂອງ ພຣະຜູ້-
ເປັນເຈົ້າ ແລະປະຕິບັດຕາມ ເພື່ອເຈົ້າຈະບໍ່ເຮັດຫຍັງຕາມຄວາມພໍໃຈຂອງເຈົ້າ ຊຶ່ງເຈົ້າມັກຫລິງ
ເຮັດຕາມນັ້ນ [40]ເພື່ອວ່າເຈົ້າຈະຈົດຈຳ ແລະເຮັດຕາມບັນຍັດທັງໝົດຂອງເຮົາ ແລະເປັນຄົນບໍ-
ລິສຸດຕໍ່ ພຣະເຈົ້າ ຂອງເຈົ້າ [41]ເຮົາຄື ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງເຈົ້າຜູ້ນຳເຈົ້າອອກຈາກແຜ່ນ-
ດິນ ເອຢິບ ເພື່ອເປັນ ພຣະເຈົ້າ ຂອງເຈົ້າ ເຮົາຄື ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງເຈົ້າ"

# ບົດທີ 16

## ດ້າຍສີຟ້າ

[1]ໂກຣາ ລູກຊາຍອິດຊະຮາ ຜູ້ເປັນລູກຊາຍ ໂກຮາດ ຜູ້ເປັນລູກຊາຍ ເລວີ ກັບ ດາທານ ແລະ
ອາບີຣາມ ລູກຊາຍ ເອລີອາບ ກັບ ໂອນ ລູກຊາຍ ເປເລດ ລູກຊາຍ ຣູເບັນ ພາຄົນໄປ [2]ແລະໄປ
ຢືນຕໍ່ໜ້າ ໂມເຊ ພ້ອມກັບລູກຫລານ ອິສຣາເອນ ຈຳນວນໜຶ່ງ ເປັນເຈົ້ານາຍຂອງຊຸມນຸມຊົນມີ
ສອງຮ້ອຍຫ້າສິບຄົນທີ່ເລືອກມາຈາກທີ່ປະຊຸມ ເປັນຄົນມີຊື່ສຽງ [3]ແລະພວກເຂົາມາປະຊຸມກັນຕໍ່
ໂມເຊ ຕໍ່ ອາໂຣນ ກ່າວແກ່ທ່ານທັງສອງວ່າ "ທ່ານເຮັດເກີນເຫດໄປ ຊຸມນຸມຊົນທັງໝົດກໍບໍລິສຸດ
ທຸກໆຄົນ ແລະ ພຣະຜູ້ເປັນເຈົ້າ ຊົງສະຖິດທ່າມກາງພວກເຂົາ ເຫດໃດທ່ານຈຶ່ງຈອງຫອງຂຶ້ນ
ເໜືອຊຸມນຸມຊົນຂອງ ພຣະຜູ້ເປັນເຈົ້າ"
[4]ຄັນ ໂມເຊ ໄດ້ຍິນກໍກົ້ມໜ້າລົງ ເຖິງດິນ [5]ທ່ານຈຶ່ງ ເວົ້າກັບ ໂກຣາ ແລະພັກພວກທັງໝົດຂອງ
ພວກ ເຂົາວ່າ "ມື້ອື່ນເຊົ້າ ພຣະຜູ້ເປັນເຈົ້າ ຈະຊົງສະແດງໃຫ້ເຫັນວ່າ ຜູ້ໃດ ເປັນຂອງພຣະອົງ
ແລະໃຜເປັນຄົນບໍລິສຸດ ແລະຈະຊົງໃຫ້ຜູ້ນັ້ນເຂົ້າໃກ້ພຣະອົງ ຜູ້ໃດທີ່ພຣະອົງຊົງເລືອກ ພຣະອົງ
ຈະຊົງໃຫ້ເຂົ້າໄປໃກ້ພຣະອົງ [6]ຈົ່ງເຮັດຢ່າງນີ້ ໃຫ້ ໂກຣາ ແລະພັກພວກທັງໝົດຂອງພວກເຂົານຳ
ຖາດຮອງໄຟມາ [7]ຈົ່ງເອົາໄຟໃສ່ ແລະໃສ່ເຄື່ອງຫອມຕໍ່ພຣະພັກ ພຣະຜູ້ເປັນເຈົ້າ ໃນມື້ອື່ນເຊົ້ານີ້
ຜູ້ໃດທີ່ ພຣະຜູ້ເປັນເຈົ້າ ຊົງເລືອກກໍຈະເປັນຄົນບໍລິສຸດ ລູກຊາຍຂອງ ເລວີ ເອີຍ ທ່ານທັງຫລາຍ
ໄດ້ເຮັດເກີນເຫດໄປ" [8]ແລະ ໂມເຊ ເວົ້າກັບ ໂກຣາວ່າ "ພວກທ່ານຜູ້ເປັນລູກຊາຍຂອງ ເລວີ ຈົ່ງຟັງ
[9]ເປັນການ ເລັກນ້ອຍສຳລັບທ່ານຢູ່ອີກຫລື ຊຶ່ງ ພຣະເຈົ້າ ແຫ່ງ ອິສຣາເອນ ໄດ້ ແຍກທ່ານອອກ

ຈາກຊຸມນຸມຊົນ ອິສຣາເອນ ເພື່ອນຳທ່ານໃຫ້ມາໃກ້ພຣະອົງໃຫ້ເຮັດວຽກໃນຫໍເຕັນຂອງ ພຣະຜູ້-
ເປັນເຈົ້າ ແລະຢືນຢູ່ຕໍ່ໜ້າຊຸມນຸມຊົນເພື່ອບົວລະບັດພວກເຂົາ 10ແລະພຣະອົງຊົງນຳທ່ານມາໃກ້
ພຣະອົງລວມທັງພີ່ນ້ອງທັງໝົດຂອງທ່ານ ຄືລູກຫລານຂອງ ເລວີ ທ່ານທັງຫລາຍສະແຫວງຫາ
ຕຳແໜ່ງປະໂລຫິດດ້ວຍຫລື 11ເພາະສະນັ້ນການທີ່ທ່ານ ແລະພັກພວກທັງໝົດຂອງທ່ານໄດ້
ປະຊຸມກັນກໍເປັນການຕໍ່ສູ້ ພຣະຜູ້ເປັນເຈົ້າ ສ່ວນ ອາໂຣນ ເປັນຫຍັງບໍທີ່ທ່ານໄດ້ຈົ່ມວ່າພວກເຂົາ”
12ໂມເຊ ໃຊ້ໃຫ້ໄປເອີ້ນ ດາທານ ແລະ ອາບີຣາມ ລູກຊາຍ ເອລີອາບ ພວກເຂົາທັງສອງວ່າ “ເຮົາ
ຈະບໍ່ຂຶ້ນໄປ 13ເປັນການເລັກນ້ອຍຢູ່ຫລືທີ່ທ່ານນຳພວກເຮົາອອກຈາກແຜ່ນດິນທີ່ມີນ້ຳນົມ ແລະ
ນ້ຳເຜີ້ງໄຫລບໍລິບູນ ເພື່ອຈະຂ້າພວກເຮົາໃນຖິ່ນແຫ້ງແລ້ງກັນດານ ແລະທ່ານຈະໄດ້ຕັ້ງຕົວຂຶ້ນ
ເປັນເຈົ້ານາຍເໜືອພວກເຮົາດ້ວຍ 14ຍິ່ງກວ່ານັ້ນອີກທ່ານບໍ່ໄດ້ນຳພວກເຮົາເຂົ້າໄປຍັງແຜ່ນດິນທີ່
ມີນ້ຳນົມ ແລະນ້ຳເຜີ້ງໄຫລບໍລິບູນ ບໍ່ໄດ້ໃຫ້ພວກເຮົາຮັບທີ່ນາ ຫລືສວນອະງຸ່ນເປັນມໍລະດົກ
ທ່ານຈະຄວັກຕາຄົນເຫລົ່ານີ້ອອກບໍ ເຮົາຈະບໍ່ຂຶ້ນໄປ”

15ໂມເຊ ໃຈຮ້າຍຫລາຍ ແລະຂາບທູນ ພຣະຜູ້ເປັນເຈົ້າ ວ່າ “ຂໍຢ່າຊົງພໍພຣະໄທເຄື່ອງບູຊາ
ຂອງພວກເຂົາເລີຍ ຂ້າພະອົງບໍ່ໄດ້ເອົາລໍຂອງເຂົາເຈົ້າມາຈັກໂຕໜຶ່ງ ແລະຂ້າພະອົງບໍ່ໄດ້ເຮັດ
ອັນຕະລາຍເຂົາເຈົ້າຈັກ ຄົນດຽວ”

16ແລະ ໂມເຊ ເວົ້າກັບ ໂກຣາ ວ່າ “ຕົວທ່ານ ແລະພັກພວກທັງໝົດຂອງທ່ານຈົ່ງເຂົ້າເຝົ້າ ພຣະ-
ຜູ້ເປັນເຈົ້າ ໃນມື້ອື່ນນີ້ ທັງຕົວທ່ານ ພັກພວກຂອງທ່ານແລະ ອາໂຣນ 17ໃຫ້ທຸກຄົນນຳຖາດຮອງ
ໄຟຂອງຕົນໄປ ໃສ່ເຄື່ອງຫອມໃນນັ້ນ ໃຫ້ທຸກຄົນນຳຖາດຮອງໄຟເຂົ້າເຝົ້າ ພຣະຜູ້ເປັນເຈົ້າ ມີ
ຖາດຮອງໄຟສອງຮ້ອຍຫ້າສິບນຳກັນ ຕົວທ່ານດ້ວຍ ແລະ ອາໂຣນ ຈົ່ງເອົາຖາດຮອງໄຟຂອງ
ຕົນໄປນຳ” 18ດັ່ງນັ້ນ ທຸກຄົນຈຶ່ງນຳຖາດຮອງໄຟຂອງພວກເຂົາມາ ຕ່າງກໍເອົາໄຟໃສ່ ແລະເອົາ
ເຄື່ອງຫອມໃສ່ ແລ້ວເຂົ້າໄປຢືນຢູ່ທີ່ປະຕູຫໍເຕັນສັກສິດແຫ່ງຊຸມນຸມພ້ອມກັບ ໂມເຊ ແລະ ອາໂຣນ
19ໂກຣາ ກໍຮ່ວມຊຸມນຸມຊົນທັງໝົດທີ່ປະຕູຫໍເຕັນສັກສິດ ແຫ່ງຊຸມນຸມປະເຊີນໜ້າກັບພວກເຂົາທັງ
ສອງ ແລະສະຫງ່າລາສີຂອງ ພຣະຜູ້ເປັນເຈົ້າກໍປະກົດຕໍ່ບັນດາຊຸມນຸມຊົນ

20ພຣະຜູ້ເປັນເຈົ້າ ກ່າວກັບ ໂມເຊ ແລະ ອາໂຣນ ວ່າ 21“ຈົ່ງ ແຍກຕົວອອກຈາກຊຸມນຸມຊົນນີ້
ເພື່ອເຮົາຈະລ້າງຜານພວກເຂົາໃນພັບຕາດຽວ” 22ພວກເຂົາທັງສອງກົ້ມໜ້າລົງເຖິງດິນຂາບທູນ
ວ່າ “ຂ້າແດ່ ພຣະເຈົ້າ ຜູ້ຊົງເປັນ ພຣະເຈົ້າ ແຫ່ງຈິດວິນຍານຂອງມະນຸດທັງປວງ ເມື່ອຄົນດຽວ
ເຮັດຜິດ ພຣະອົງຈະຊົງພຣະພິໂລດແກ່ຊຸມນຸມຊົນທັງໝົດຫລື”

## ການກະບົດຂອງໂກຣາ ດາທານແລະອາບີຣາມ

23ພຣະຜູ້ເປັນເຈົ້າ ກ່າວກັບ ໂມເຊ ວ່າ 24“ຈົ່ງກ່າວແກ່ຊຸມນຸມຊົນວ່າ ຈົ່ງອອກໄປໃຫ້ຫ່າງຈາກ
ເຕັນຂອງ ໂກຣາ ດາທານ ແລະ ອາບີຣາມ” 25ແລ້ວ ໂມເຊ ກໍລຸກຂຶ້ນໄປຫາ ດາທານ ແລະ ອາບີ-
ຣາມ ແລະພວກຜູ້ໃຫຍ່ ແຫ່ງ ອິສຣາເອນ 26ໂມເຊ ຈຶ່ງກ່າວແກ່ຊຸມນຸມຊົນນັ້ນວ່າ “ທ່ານທັງຫລາຍ
ອອກໄປໃຫ້ຫ່າງຈາກເຕັນຂອງຄົນຊົ່ວເຫລົ່ານີ້ ຢ່າແຕະຕ້ອງຫຍັງຂອງພວກເຂົາ ຢ້ານວ່າທ່ານ
ທັງຫລາຍຈະຕ້ອງຖືກກວາດໄປ ກັບບັນດາຄວາມບາບຂອງພວກເຂົາດ້ວຍ” 27ດັ່ງນັ້ນ ພວກ
ເຂົາກໍອອກໄປໃຫ້ຫ່າງຈາກເຕັນຂອງ ໂກຣາ ດາທານ ແລະ ອາບີຣາມ ແລະດາທານກັບ ອາບີ-

ຣາມ ອອກມາຢືນຢູ່ທີ່ປະຕູເຕັນຂອງຕົນພ້ອມກັບເມຍ ລູກຊາຍ ແລະລູກນ້ອຍຂອງພວກເຂົາ
[28]ແລະ ໂມເຊ ເວົ້າວ່າ “ດັ່ງນີ້ແຫລະ ທ່ານທັງຫລາຍຈະໄດ້ຮູ້ວ່າ ພຣະຜູ້ເປັນເຈົ້າ ໄດ້ໃຊ້ໃຫ້ຂ້າ-
ພະເຈົ້າມາເຮັດການທັງປວງນີ້ ຂ້າພະເຈົ້າບໍ່ໄດ້ເຮັດຕາມໃຈຂ້າພະເຈົ້າເອງ [29]ຖ້າຄົນເຫລົ່ານີ້
ຕາຍຢ່າງຄົນທຳມະດາທັງປວງ ຫລືມີເຫດການຢ່າງຄົນທຳມະດາເກີດຂຶ້ນກັບພວກເຂົາ ກໍໝາຍ
ຄວາມວ່າ ພຣະຜູ້ເປັນເຈົ້າ ບໍ່ໄດ້ຊົງໃຊ້ຂ້າພະເຈົ້າມາ [30]ແຕ່ຖ້າ ພຣະຜູ້ເປັນເຈົ້າ ບັນດານໃຫ້ອັນ
ໃໝ່ເກີດຂຶ້ນ ແລະແຜ່ນດິນອ້າປາກກືນຄົນເຫລົ່ານີ້ເຂົ້າໄປພ້ອມກັບເຄື່ອງຂອງທັງໝົດຂອງພວກ
ເຂົາ ແລະພວກເຂົາລົງໄປສູ່ແດນຄົນຕາຍທັງເປັນ ທ່ານທັງຫລາຍ ຈົ່ງຮູ້ໄວ້ວ່າຄົນເຫລົ່ານີ້ໄດ້
ໝິ່ນປະໝາດ ພຣະຜູ້ເປັນເຈົ້າ”
[31]ຕໍ່ມາ ເມື່ອເພິ່ນກ່າວບັນດາຄຳເຫລົ່ານີ້ຈົບ ແຜ່ນດິນທີ່ພວກເຂົາເຫລົ່ານັ້ນຢືນຢູ່ກໍແຍກອອກ
[32]ແລະ ແຜ່ນດິນກໍອ້າປາກອອກກືນກິນພວກເຂົາກັບຄອບຄົວ ແລະບັນດາຄົນຂອງ ໂກຣາ ແລະ
ເຄື່ອງຂອງທັງໝົດຂອງພວກເຂົາ [33]ດັ່ງນັ້ນ ພວກເຂົາພ້ອມກັບເຄື່ອງຂອງທັງໝົດຂອງພວກເຂົາ
ກໍຕົກລົງໄປສູ່ແດນຄົນຕາຍທັງເປັນ ແລະແຜ່ນດິນກໍງັບພວກເຂົາໄວ້ ແລະພວກເຂົາກໍພິນາດໄປ
ຈາກທ່າມກາງທີ່ປະຊຸມ [34]ອິສຣາເອນ ທັງໝົດທີ່ຢູ່ຮອບພວກເຂົາໄດ້ຍິນສຽງຮ້ອງພວກເຂົາກໍໜີ
ໄປ ແລະກ່າວວ່າ “ຢ້ານວ່າດິນຈະກືນກິນພວກເຮົາ” [35]ແລະມີໄຟອອກມາຈາກ ພຣະຜູ້ເປັນເຈົ້າ
ເຜົາຜານຄົນທັງສອງຮ້ອຍຫ້າສິບຄົນທີ່ໄດ້ຖວາຍເຄື່ອງຫອມນັ້ນ
[36]ແລ້ວ ພຣະຜູ້ເປັນເຈົ້າ ກ່າວກັບ ໂມເຊ ວ່າ [37]“ຈົ່ງບອກ ເອເລອາຊາ ລູກຊາຍ ອາໂຣນ ປະໂລ-
ຫິດ ໃຫ້ເອົາຖາດຮອງໄຟອອກຈາກແປວໄຟ ແລະເຈົ້າຈົ່ງນຳກ້ອນໄຟອອກຫ່າງໆກັນ ເພາະ
ຖາດຮອງໄຟເຫລົ່ານັ້ນບໍລິສຸດ [38]ຄືຖາດຮອງໄຟຂອງຄົນເຫລົ່ານີ້ທີ່ໄດ້ເຮັດບາບຈົນເສຍຊີວິດນັ້ນ
ຈົ່ງຕີແຜ່ໂລຫະເຮັດເປັນແຜ່ນຄຸມແທ່ນບູຊາ ເພາະໄດ້ຖວາຍຖາດຮອງໄຟເຫລົ່ານັ້ນຕໍ່ພຣະພັກ
ພຣະຜູ້ເປັນເຈົ້າ ຈຶ່ງເປັນສິ່ງບໍລິສຸດ ດັ່ງນັ້ນ ສິ່ງເຫລົ່ານີ້ຈະເປັນໝາຍສຳຄັນແກ່ລູກຫລານ ອິ-
ສຣາເອນ” [39]ດັ່ງນັ້ນ ເອເລອາຊາ ຈຶ່ງນຳຖາດຮອງໄຟທອງສຳລິດ ຊຶ່ງຜູ້ທີ່ຖືກໄຟເຜົານຳໄປບູຊາ
ມາຕີແຜ່ອອກເປັນແຜ່ນຄຸມແທ່ນບູຊາ [40]ໃຫ້ເປັນເຄື່ອງເຕືອນໃຈລູກຫລານ ອິສຣາເອນ ເພື່ອວ່າ
ຄົນສາມັນຜູ້ທີ່ບໍ່ແມ່ນເຊື້ອສາຍຂອງ ອາໂຣນ ຈະບໍ່ໄດ້ເຂົ້າໄປເຜົາເຄື່ອງຫອມຖວາຍຕໍ່ພຣະພັກ
ພຣະຜູ້ເປັນເຈົ້າ ຢ້ານວ່າຈະເປັນ ແບບ ໂກຣາ ແລະພັກພວກຂອງລາວ ດັ່ງທີ່ ພຣະຜູ້ເປັນເຈົ້າ
ກ່າວກັບ ເອເລອາຊາ ທາງ ໂມເຊ [41]ເມື່ອຮຸ່ງເຊົ້າຂຶ້ນ ບັນດາຊຸມນຸມຊົນ ອິສຣາເອນ ກໍຈົ່ມຮ້າຍ ໂມ-
ເຊ ແລະ ອາໂຣນ ວ່າ “ທ່ານໄດ້ປະຫານຊີວິດຄົນຂອງ ພຣະຜູ້ເປັນເຈົ້າ” [42]ຕໍ່ມາເມື່ອຊຸມນຸມຊົນມາ
ປະຊຸມປະເຊີນໜ້າ ໂມເຊ ແລະ ອາໂຣນ ພວກເຂົາຫັນໜ້າມາສູ່ຫໍເຕັນສັກສິດ ແຫ່ງຊຸມນຸມ ແລະ
ເບິ່ງແມ ເມກມາຄຸມຫໍເຕັນສັກສິດນັ້ນ ແລະສະຫງ່າລາສີຂອງ ພຣະຜູ້ເປັນເຈົ້າ ກໍປະກົດ [43]ໂມເຊ
ກັບ ອາໂຣນ ຈຶ່ງມາຢູ່ໜ້າຫໍເຕັນສັກສິດແຫ່ງຊຸມນຸມ

## ແຜ່ນດິນອ້າປາກອອກກືນກິນພວກກະບົດ

[44]ແລະ ພຣະຜູ້ເປັນເຈົ້າ ກ່າວກັບ ໂມເຊ ວ່າ [45]“ຈົ່ງອອກໄປຈາກທ່າມກາງປະຊຸມນີ້ ເພື່ອເຮົາ
ຈະຜານພວກເຂົາໃນພັບຕາດຽວ” ແລະເພິ່ນທັງສອງກໍກົ້ມໜ້າລົງເຖິງດິນ [46]ໂມເຊ ເວົ້າກັບ ອາ-
ໂຣນ ວ່າ “ຈົ່ງເອົາຖາດຮອງໄຟ ເອົາໄຟຈາກແທ່ນບູຊາໃສ່ໄວ້ ແລ້ວໃສ່ເຄື່ອງຫອມ ຮີບນຳໄປທີ່

ຊຸມນຸມຊົນ ເພື່ອເຮັດການລຶບລ້າງມົນທິນບາບຂອງຊຸມນຸມຊົນນັ້ນ ເພາະພຣະພິໂລດກໍພຸ່ງອອກ
ມາຈາກ ພຣະຜູ້ເປັນເຈົ້າ ແລ້ວ ໄພພິບັດໄດ້ບັງເກີດຂຶ້ນແລ້ວ" 47ອາໂຣນ ຈຶ່ງນໍາຖາດຮອງໄຟດັ່ງ
ທີ່ ໂມເຊບອກ ແລ່ນເຂົ້າໄປທ່າມກາງທີ່ປະຊຸມ ແລະເບິ່ງແມ ໄພພິບັດໄດ້ບັງເກີດຂຶ້ນແກ່ປະຊາ-
ຊົນ ແລ້ວ ແລະ ເພິ່ນ ໄດ້ ໃສ່ເຄື່ອງຫອມ ແລະ ເຮັດການ ລຶບລ້າງ ມົນທິນບາບ ຂອງປະຊາຊົນ
48ເພິ່ນໄດ້ຢືນຢູ່ລະຫວ່າງຄົນຕາຍກັບຄົນເປັນ ແລະໄພພິບັດນັ້ນກໍສະຫງົບລົງ 49ບັນດາຄົນທີ່
ຕາຍດ້ວຍໄພພິບັດມີໜຶ່ງໝື່ນສີ່ພັນເຈັດຮ້ອຍຄົນ ບໍ່ນັບຄົນທີ່ຕາຍດ້ວຍເລື່ອງຂອງ ໂກຣາ 50ເມື່ອ
ໄພພິບັດສະຫງົບລົງແລ້ວ ອາໂຣນກໍກັບໄປຫາ ໂມເຊທີ່ປະຕູຫໍເຕັນສັກສິດແຫ່ງຊຸມນຸມ

# ບົດທີ 17

## ການອ້ອນວອນຂອງໂມເຊ ຊ່ວຍລູກຫລານອິສຣາເອນໃຫ້ລອດພົ້ນ

1ພຣະຜູ້ເປັນເຈົ້າ ກ່າວກັບ ໂມເຊວ່າ 2"ຈົ່ງ ເວົ້າກັບລູກຫລານ ອິສຣາເອນ ແລະ ເອົາໄມ້ເທົ້າມາ
ຈາກພວກເຂົາ ແຕ່ລະອັນຈາກຫົວໜ້າທຸກຄົນ ຕາມຍາດຕິພີ່ນ້ອງ ຕາມບັນພະບູລຸດ ເປັນໄມ້-
ເທົ້າສິບສອງອັນ ຂຽນຊື່ຊາຍຜູ້ເປັນເຈົ້າຂອງໄມ້ໄວ້ເທິງໄມ້ເທົ້າທຸກອັນ 3ຂຽນຊື່ຂອງ ອາໂຣນ ໄວ້
ເທິງ ໄມ້ເທົ້າຂອງຄົນ ເລວີ ເພາະຈະມີໄມ້ເທົ້າອັນດຽວສໍາລັບຫົວໜ້າຍາດຕິພີ່ນ້ອງຕາມບັນພະບູ-
ລຸດໜຶ່ງ 4ຈົ່ງວາງໄມ້ເທົ້າເຫລົ່ານັ້ນໄວ້ໃນຫໍເຕັນສັກສິດແຫ່ງຊຸມນຸມ ຕໍ່ໜ້າຫີບພຣະສັນຍາທີ່ເຮົາ
ພົບກັບພວກເຈົ້າ 5ແລະຕໍ່ມາໄມ້ເທົ້າຂອງຊາຍຜູ້ທີ່ເຮົາເລືອກນັ້ນຈະງອກ ດ້ວຍວິທີນີ້ ເຮົາຈະ
ເຮັດໃຫ້ສຽງຈົ່ມຂອງລູກຫລານ ອິສຣາເອນ ຊຶ່ງພວກເຂົາຈົ່ມຕໍ່ເຈົ້ານັ້ນສະຫງົບລົງ"

6ໂມເຊ ຈຶ່ງສັ່ງລູກຫລານ ອິສຣາເອນ ແລະຫົວໜ້າຂອງລາວທຸກຄົນກໍມອບໄມ້ເທົ້າແກ່ເພິ່ນຄົນ
ລະອັນ ຕາມຍາດຕິພີ່ນ້ອງ ຕາມບັນພະບູລຸດ ເປັນໄມ້ເທົ້າສິບສອງອັນ ແລະໄມ້ເທົ້າຂອງ ອາ-
ໂຣນກໍຢູ່ໃນໄມ້ເທົ້າເຫລົ່ານັ້ນດ້ວຍ 7ແລະ ໂມເຊວາງໄມ້ເທົ້າເຫລົ່ານັ້ນຕໍ່ພຣະພັກ ພຣະຜູ້ເປັນເຈົ້າ
ໃນຫໍເຕັນສັກສິດ

8ເມື່ອຮຸ່ງເຊົ້າຂຶ້ນ ໂມເຊ ໄດ້ເຂົ້າໄປໃນຫໍເຕັນສັກສິດ ເບິ່ງແມ ໄມ້ເທົ້າຂອງ ອາໂຣນ ສໍາລັບ
ຕະກູນ ເລວີ ໄດ້ງອກ ມີດອກຈູມ ແລະດອກບານ ແລະເກີດເປັນໝາກບົກ ບາງໜ່ວຍກໍສຸກ
9ແລ້ວ ໂມເຊ ໄດ້ນໍາໄມ້ເທົ້າທັງໝົດຈາກພຣະພັກ ພຣະຜູ້ເປັນເຈົ້າ ມາຍັງລູກຫລານ ອິສຣາເອນທັງ
ໝົດພວກເຂົາໄດ້ກວດເບິ່ງ ແລະທຸກຄົນກໍນໍາເອົາໄມ້ເທົ້າຂອງຕົນໄປ

10ພຣະຜູ້ເປັນເຈົ້າ ກ່າວກັບ ໂມເຊວ່າ "ຈົ່ງນໍາໄມ້ເທົ້າຂອງ ອາໂຣນ ກັບໄປວາງໄວ້ຕໍ່ໜ້າພຣະ-
ສັນຍາ ເກັບໄວ້ເປັນໝາຍສໍາຄັນສໍາລັບເຕືອນພວກກະບົດ ເພື່ອເຈົ້າຈະໃຫ້ພວກເຂົາເຊົາຈົ່ມວ່າ
ເຮົາ ເພື່ອພວກເຂົາຈະບໍ່ຕ້ອງຕາຍ" 11ໂມເຊກໍເຮັດຕາມນັ້ນ ພຣະຜູ້ເປັນເຈົ້າ ກ່າວສັ່ງເພິ່ນຢ່າງ-
ໃດ ເພິ່ນກໍເຮັດຢ່າງນັ້ນ

12ແລະລູກຫລານ ອິສຣາເອນ ເວົ້າກັບ ໂມເຊວ່າ "ເບິ່ງແມ ເຮົາພິນາດ ເຮົາຈິບຫາຍໝົດແລ້ວ
13ຜູ້ໃດທີ່ມາໃກ້ຫໍເຕັນສັກສິດແຫ່ງ ພຣະຜູ້ເປັນເຈົ້າຕ້ອງຕາຍ ເຮົາຈະຕ້ອງຕາຍໝົດຫລື"

# ບົດທີ 18

## ໄມ້ເທົ້າຂອງອາໂຣນໄດ້ປົ່ງດອກ ມີດອກຈູມ ແລະດອກບານ

[1]ດັ່ງນັ້ນ ພຣະຜູ້ເປັນເຈົ້າຈຶ່ງກ່າວກັບອາໂຣນວ່າ "ເຈົ້າແລະລູກຊາຍຂອງເຈົ້າ ແລະຕະກູນພໍ່
ຂອງເຈົ້າຈະຕ້ອງຮັບໂທດຕາມຄວາມຊົ່ວຊ້າເນື່ອງດ້ວຍສະຖານທີ່ບໍລິສຸດ ທັງເຈົ້າແລະລູກຊາຍ
ຂອງເຈົ້າຈະຕ້ອງຮັບໂທດຕາມຄວາມຊົ່ວຊ້າເນື່ອງດ້ວຍໜ້າທີ່ປະໂລຫິດຂອງເຈົ້າ

[2]ແລະຈົ່ງນຳພີ່ນ້ອງຂອງເຈົ້າມາໃກ້ເຈົ້າ ຊຶ່ງແມ່ນຕະກູນເລວີ ຕະກູນພໍ່ຂອງເຈົ້າ ເພື່ອພວກ
ເຂົາຈະສົມທົບກັບເຈົ້າ ແລະບົວລະບັດເຈົ້າ ໃນຂະນະທີ່ເຈົ້າແລະລູກຊາຍບົວລະບັດຢູ່ຕໍ່ໜ້າຫໍ-
ເຕັນສັກສິດ [3]ພວກເຂົາຈະຄອຍຖ້າຮັບໃຊ້ເຈົ້າ ແລະຮັບໃຊ້ບັນດາໜ້າທີ່ຕ່າງໆຂອງຫໍເຕັນສັກ-
ສິດ ແຕ່ຢ່າໃຫ້ເຂົ້າໃກ້ເຄື່ອງໃຊ້ຂອງສະຖານທີ່ບໍລິສຸດ ຫລືແທ່ນບູຊາ ຢ້ານວ່າພວກເຂົາ ແລະ
ເຈົ້າຈະຕ້ອງຕາຍ [4]ພວກເຂົາຈະສົມທົບກັບພວກເຈົ້າ ແລະຄອຍຖ້າຮັບໃຊ້ຢູ່ຫໍເຕັນສັກສິດແຫ່ງ
ຊຸມນຸມ ໃນງານບົວລະບັດທັງປວງຂອງຫໍເຕັນສັກສິດ ແລະຢ່າໃຫ້ຜູ້ອື່ນເຂົ້າມາໃກ້ເຈົ້າ [5]ພວກ
ເຈົ້າຕ້ອງຄອຍຖ້າຮັບໃຊ້ໃນໜ້າທີ່ຂອງສະຖານທີ່ບໍລິສຸດ ແລະໜ້າທີ່ຂອງແທ່ນບູຊາ ເພື່ອພຣະ-
ພິໂລດຈະບໍ່ເກີດຂຶ້ນແກ່ລູກຫລານອິສຣາເອນອີກ [6]ແລະເບິ່ງແມ ເຮົາໄດ້ເລືອກຄົນເລວີພີ່ນ້ອງ
ຂອງເຈົ້າອອກຈາກລູກຫລານອິສຣາເອນ ເປັນຂອງປະທານແກ່ເຈົ້າຖວາຍແກ່ພຣະຜູ້ເປັນເຈົ້າ
ເພື່ອໃຫ້ເຮັດວຽກຂອງຫໍເຕັນສັກສິດແຫ່ງຊຸມນຸມ [7]ທັງເຈົ້າ ແລະລູກຊາຍຈົ່ງຄອຍຖ້າຮັບໃຊ້ໃນ
ຕຳແໜ່ງປະໂລຫິດ ເພື່ອງານທຸກສິ່ງທີ່ກ່ຽວຂ້ອງກັບແທ່ນບູຊາແລະສິ່ງທີ່ຢູ່ພາຍໃນຜ້າກັ້ງ ເຈົ້າ
ຕ້ອງຢູ່ບົວລະບັດເຮົາ ເຮົາໃຫ້ຕຳແໜ່ງປະໂລຫິດແກ່ເຈົ້າເປັນຂອງປະທານສຳລັບການເຮັດວຽກ
ແລະຜູ້ອື່ນທີ່ເຂົ້າມາໃກ້ຕ້ອງເຖິງແກ່ຄວາມຕາຍ"

[8]ແລ້ວພຣະຜູ້ເປັນເຈົ້າກ່າວກັບອາໂຣນວ່າ "ເບິ່ງແມ ເຮົາໄດ້ໃຫ້ເຄື່ອງບູຊາຂອງເຮົາສ່ວນ
ໜຶ່ງ ແກ່ເຈົ້າຄືບັນດາເຄື່ອງຖວາຍຂອງລູກຫລານອິສຣາເອນ ເຮົາໃຫ້ແກ່ເຈົ້າສ່ວນໜຶ່ງ ແລະ
ແກ່ລູກຫລານຂອງເຈົ້າເປັນ ກົດຖາວອນ ເພາະເຫດວ່າພວກເຈົ້າໄດ້ຮັບການເຈີມແລ້ວ [9]ໃນ
ບັນດາຂອງບໍລິສຸດທີ່ສຸດ ສ່ວນທີ່ບໍ່ໄດ້ເຜົາໄຟທີ່ເປັນຂອງຂອງເຈົ້າມີດັ່ງນີ້ ບັນດາຂອງຖວາຍ
ຂອງພວກເຂົາ ບັນດາເຄື່ອງບູຊາພືດຜົນເປັນເມັດ ບັນດາເຄື່ອງບູຊາໄຖ່ບາບຂອງພວກເຂົາ
ບັນດາເຄື່ອງບູຊາໄຖ່ການລະເມີດຂອງພວກເຂົາ ຊຶ່ງພວກເຂົາຖວາຍແກ່ເຮົາ ຈະເປັນຂອງບໍລິ-
ສຸດທີ່ສຸດແກ່ເຈົ້າ ແລະແກ່ລູກຫລານຂອງເຈົ້າ [10]ເຈົ້າຈົ່ງຮັບປະທານສິ່ງເຫລົ່ານີ້ໃນທີ່ບໍລິສຸດທີ່
ສຸດ ຜູ້ຊາຍທຸກຄົນຮັບປະທານໄດ້ ເປັນຂອງບໍລິສຸດແກ່ເຈົ້າ

[11]ສິ່ງຕໍ່ໄປນີ້ກໍເປັນຂອງເຈົ້າດ້ວຍ ເຄື່ອງທີ່ພວກເຂົາຖວາຍ ບັນດາເຄື່ອງບູຊາແກວ່ງຖວາຍ
ຂອງລູກຫລານອິສຣາເອນ ເຮົາໄດ້ໃຫ້ໄວ້ແກ່ເຈົ້າ ແລະແກ່ລູກຊາຍຍິງ ຊຶ່ງຢູ່ກັບເຈົ້າເປັນກົດ-
ເກນຖາວອນ ທຸກຄົນທີ່ສະອາດຢູ່ໃນຄອບຄົວຂອງເຈົ້າຮັບປະທານໄດ້

[12]ນ້ຳມັນທີ່ດີທີ່ສຸດທັງໝົດ ແລະນ້ຳອະງຸ່ນທີ່ດີທີ່ສຸດແລະເມັດພືດທັງໝົດ ແລະຜົນລຸ້ນທຳອິດ
ທີ່ພວກເຂົາຖວາຍແກ່ພຣະຜູ້ເປັນເຈົ້າ ເຮົາມອບໃຫ້ແກ່ເຈົ້າ [13]ຜົນສຸກລຸ້ນທຳອິດຂອງທຸກຢ່າງ
ຊຶ່ງຢູ່ໃນແຜ່ນດິນ ທີ່ພວກເຂົານຳມາຖວາຍພຣະຜູ້ເປັນເຈົ້າ ຈະເປັນຂອງເຈົ້າ ທຸກຄົນທີ່ສະອາດ
ຢູ່ໃນຄອບຄົວຂອງເຈົ້າຮັບປະທານໄດ້

14ບັນດາຂອງມອບຖວາຍໃນອິສຣາເອນຈະເປັນຂອງເຈົ້າ 15ບັນດາເນື້ອໜັງທີ່ເກີດຈາກມົດ
ລູກ ບໍ່ວ່າມະນຸດ ຫລືສັດ ຊຶ່ງພວກເຂົາຖວາຍແກ່ພຣະຜູ້ເປັນເຈົ້າຈະເປັນຂອງເຈົ້າ ແຕ່ຢ່າງໃດ
ກໍຕາມ ບຸດຫົວປີຂອງມະນຸດເຈົ້າຈະຕ້ອງໄຖ່ໄວ້ ເຈົ້າຕ້ອງໄຖ່ລູກຫົວປີຂອງບັນດາສັດທັງປວງທີ່
ມີມົນທິນດ້ວຍ 16ແລະຄ່າໄຖ່ ເມື່ອອາຍຸໄດ້ໜຶ່ງເດືອນເຈົ້າກໍຕ້ອງໄຖ່ ໃຫ້ເຈົ້າກຳນົດວ່າເປັນເງິນ
ຫ້າເຊເຂຕາມເຊເຂຂອງສະຖານທີ່ບໍລິສຸດ ຊຶ່ງເປັນຊາວເກຣາ 17ແຕ່ລູກຫົວປີຂອງງົວ ຫລືລູກ
ຫົວປີຂອງແກະ ຫລືລູກຫົວປີຂອງແບ້ ເຈົ້າບໍ່ຕ້ອງໄຖ່ ເພາະເປັນຂອງບໍລິສຸດ ເຈົ້າຈົ່ງເອົາເລືອດ
ຂອງມັນຊິດໃສ່ແທ່ນບູຊາ ແລະເອົາໄຂມັນຂອງມັນເຜົາເປັນເຄື່ອງບູຊາດ້ວຍໄຟ ໃຫ້ເປັນກິ່ນ
ຫອມທີ່ພໍພຣະໄທແກ່ພຣະຜູ້ເປັນເຈົ້າ 18ແຕ່ຊີ້ນຂອງມັນຈະເປັນຂອງເຈົ້າ ເຊັ່ນດຽວກັບຊີ້ນໜ້າ
ອົກທີ່ແກວ່ງຖວາຍ ຫລືຊີ້ນກົກຂາຂວາເປັນຂອງເຈົ້າ 19ບັນດາເຄື່ອງບູຊາບໍລິສຸດທີ່ລູກຫລານອິ-
ສຣາເອນມອບຖວາຍແກ່ພຣະຜູ້ເປັນເຈົ້າ ເຮົາໃຫ້ແກ່ເຈົ້າ ແລະແກ່ລູກຊາຍຍິງ ຊຶ່ງຢູ່ກັບເຈົ້າ
ເປັນກົດເກນຖາວອນ ເປັນຄຳໝັ້ນສັນຍາດ້ວຍເກືອເປັນນິດຕໍ່ພຣະພັກພຣະຜູ້ເປັນເຈົ້າສຳລັບ
ເຈົ້າ ແລະເຊື້ອສາຍຂອງເຈົ້າດ້ວຍ”

20ແລະພຣະຜູ້ເປັນເຈົ້າກ່າວກັບອາໂຣນວ່າ “ເຈົ້າຈະບໍ່ໄດ້ຮັບມໍລະດົກໃນແຜ່ນດິນຂອງພວກ
ເຂົາ ທັງເຈົ້າຈະບໍ່ມີສ່ວນອັນໃດກັບພວກເຂົາເລີຍ ເຮົາເປັນສ່ວນແບ່ງຂອງເຈົ້າແລະເປັນມໍລະ-
ດົກຂອງເຈົ້າທ່າມກາງລູກຫລານອິສຣາເອນ 21ເບິ່ງແມ ເຮົາໃຫ້ທຸກສິ່ງໜຶ່ງສ່ວນສິບໃນອິສຣາ-
ເອນແກ່ລູກຫລານເລວີເປັນມໍລະດົກ ເປັນຄ່າຕອບແທນວຽກທີ່ເຂົາປະຕິບັດ ຄືວຽກທີ່ເຮັດໃນ
ຫໍເຕັນສັກສິດແຫ່ງຊຸມນຸມ 22ຕັ້ງແຕ່ນີ້ຕໍ່ໄປ ລູກຫລານອິສຣາເອນຈະບໍ່ໄດ້ເຂົ້າມາໃກ້ຫໍເຕັນສັກ-
ສິດແຫ່ງຊຸມນຸມ ຢ້ານວ່າພວກເຂົາຈະຮັບໂທດບາບ ແລະຈະຕ້ອງຕາຍ 23ແຕ່ຄົນເລວີຈະຕ້ອງ
ເຮັດວຽກຂອງຫໍເຕັນສັກສິດແຫ່ງຊຸມນຸມ ແລະພວກເຂົາຈະຕ້ອງຮັບໂທດຕາມຄວາມຊົ່ວຊ້າຂອງ
ພວກເຂົາເປັນກົດເກນຖາວອນຕະຫລອດຊົ່ວອາຍຸຂອງເຈົ້າ ພວກເຂົາຈະບໍ່ມີສ່ວນໃນມໍລະດົກ
ທ່າມກາງລູກຫລານອິສຣາເອນ 24ເພາະວ່າໜຶ່ງສ່ວນສິບຂອງລູກຫລານອິສຣາເອນ ຊຶ່ງນຳມາ
ຖວາຍແກ່ພຣະຜູ້ເປັນເຈົ້າ ເຮົາໄດ້ໃຫ້ແກ່ຄົນເລວີເປັນມໍລະດົກ ເພາະສະນັ້ນ ເຮົາຈຶ່ງໄດ້ບອກ
ພວກເຂົາວ່າ ‘ພວກເຂົາຈະບໍ່ມີສ່ວນມໍລະດົກທ່າມກາງລູກຫລານອິສຣາເອນ’”

25ພຣະຜູ້ເປັນເຈົ້າກ່າວກັບໂມເຊວ່າ 26“ຍິ່ງກວ່ານັ້ນ ເຈົ້າຈົ່ງກ່າວແກ່ຄົນເລວີ ວ່າ ‘ເມື່ອ
ພວກເຈົ້າຮັບໜຶ່ງສ່ວນສິບຈາກລູກຫລານອິສຣາເອນ ຊຶ່ງເຮົາໃຫ້ແກ່ເຈົ້າອັນມາຈາກພວກເຂົາ
ເປັນມໍລະດົກຂອງເຈົ້ານັ້ນ ເຈົ້າຈົ່ງນຳໜຶ່ງສ່ວນສິບທີ່ເຈົ້າໄດ້ມານັ້ນຖວາຍແກ່ພຣະຜູ້ເປັນເຈົ້າ
27ແລະສ່ວນຖວາຍຂອງເຈົ້ານັ້ນແມ່ນພືດທີ່ໄດ້ມາຈາກລານນວດເຂົ້າ ແລະເຫລົ້າອະງຸ່ນຈາກໄຫ
ອະງຸ່ນ 28ເພາະສະນັ້ນ ເຈົ້າຕ້ອງນຳຂອງບູຊາຈາກໜຶ່ງສ່ວນສິບທັງໝົດຂອງເຈົ້າຖວາຍແກ່
ພຣະຜູ້ເປັນເຈົ້າ ຄືໜຶ່ງສ່ວນສິບທີ່ເຈົ້າໄດ້ຮັບຈາກຄົນອິສຣາເອນນັ້ນ ຈາກສ່ວນນີ້ພວກເຈົ້າຈົ່ງ
ມອບຖວາຍແກ່ພຣະຜູ້ເປັນເຈົ້າແກ່ອາໂຣນ 29ຈາກບັນດາຂອງທີ່ພວກເຈົ້າໄດ້ຮັບ ເຈົ້າຈົ່ງນຳ
ເຄື່ອງຖວາຍທຸກສິ່ງທີ່ຕ້ອງຖວາຍແກ່ພຣະຜູ້ເປັນເຈົ້າ ຄືເຄື່ອງຖວາຍທີ່ດີທີ່ສຸດ’

30ສະນັ້ນ ເຈົ້າຈົ່ງເວົ້າກັບພວກເຂົາວ່າ ‘ເມື່ອເຈົ້າໄດ້ຖວາຍສ່ວນທີ່ດີທີ່ສຸດແລ້ວ ໃຫ້ຄົນເລວີ
ນັບສ່ວນທີ່ເຫລືອຄືພືດທີ່ໄດ້ມາຈາກລານນວດເຂົ້າ ແລະຜົນທີ່ໄດ້ຈາກໄຫອະງຸ່ນ 31ແລະເຈົ້າຈະ

ຮັບປະທານສ່ວນນັ້ນຢູ່ໃສກໍໄດ້ ທັງຕົວເຈົ້າແລະຄອບຄົວຂອງເຈົ້າ ເພາະວ່າເປັນລາງວັນຕອບ
ແທນການເຮັດວຽກຂອງເຈົ້າໃນຫໍເຕັນສັກສິດແຫ່ງຊຸມນຸມ 32ເມື່ອເຈົ້າໄດ້ຖວາຍສ່ວນທີ່ດີທີ່ສຸດ
ແລ້ວ ເຈົ້າຈະບໍ່ມີໂທດບາບຍ້ອນຂອງຖວາຍນັ້ນ ແລະເຈົ້າຢ່າເຮັດໃຫ້ສິ່ງທີ່ບໍລິສຸດຂອງຄົນອິ-
ສຣາເອນເປັນມົນທິນ ຢ້ານວ່າເຈົ້າຈະຕ້ອງຕາຍ'"

# ບົດທີ 19

## ຄຳສັ່ງສອນ ແລະຄຳສັ່ງສຳລັບອາໂຣນແລະຄົນເລວີ

1ພຣະຜູ້ເປັນເຈົ້າກ່າວກັບໂມເຊ ແລະ ອາໂຣນວ່າ 2"ຕໍ່ໄປນີ້ແມ່ນກົດບັນຍັດຊຶ່ງພຣະຜູ້ເປັນ-
ເຈົ້າໄດ້ຊົງສັ່ງວ່າ ຈົ່ງບອກຄົນອິສຣາເອນໃຫ້ນຳງົວໂຕແມ່ສີແດງບໍ່ພິການຄືບໍ່ມີຕຳໜິ ແລະຍັງບໍ່
ເຄີຍເຂົ້າທຽມແອກ 3ແລະເຈົ້າຈົ່ງໃຫ້ງົວນັ້ນແກ່ເອເລອາຊາປະໂລຫິດ ແລະໃຫ້ເອົາງົວນັ້ນໄປ
ນອກຄ້າຍຂ້າຕໍ່ໜ້າພວກເຂົາ 4ແລະເອເລອາຊາຈະເອົານິ້ວມືຈຸ່ມເລືອດງົວຊິດໃສ່ໜ້າຫໍເຕັນສັກ-
ສິດແຫ່ງຊຸມນຸມເຈັດເທື່ອ 5ແລະໃຫ້ມີຄົນເຜົາງົວໂຕແມ່ນັ້ນຕໍ່ໜ້າຂອງລາວ ຄືໜັງ ເນື້ອ ແລະ
ເລືອດ ກັບຂີ້ຂອງມັນໃຫ້ເຜົາໝົດ 6ແລະປະໂລຫິດຈະເອົາໄມ້ສົນສີດາ ໄມ້ຫູສົບກັບດ້າຍສີແດງ
ໂຍນເຂົ້າໄປໃນໄຟທີ່ເຜົາງົວໂຕແມ່ນັ້ນ 7ແລ້ວປະໂລຫິດຈະຊັກເສື້ອຜ້າຂອງຕົນ ແລະຊຳລະ
ຮ່າງກາຍໃນນ້ຳ ຫລັງຈາກນັ້ນ ຈຶ່ງເຂົ້າໄປໃນຄ້າຍ ແລະປະໂລຫິດນັ້ນຈະເປັນມົນທິນຢູ່ຈົນ
ຮອດຕອນຄ່ຳ 8ຜູ້ໃດຢູ່ບ່ອນເຮັດວຽກເຜົາງົວໂຕແມ່ຕ້ອງຊັກເສື້ອຜ້າແລະຊຳລະຮ່າງກາຍຂອງ
ຕົນໃນນ້ຳ ແລະລາວຈະເປັນມົນທິນຢູ່ຈົນຮອດຕອນຄ່ຳ

9ໃຫ້ຊາຍຄົນທີ່ສະອາດເກັບຂີ້ເຖົ່າງົວໂຕແມ່ ເອົາໄປໄວ້ນອກຄ້າຍໃນທີ່ສະອາດ ໃຫ້ເກັບຂີ້-
ເຖົ່ານັ້ນໄວ້ເຮັດເປັນນ້ຳແຫ່ງມົນທິນເພື່ອຊຸມນຸມຊົນອິສຣາເອນ ສຳລັບການລຶບລ້າງບາບ
10ແລະຄົນທີ່ເກັບຂີ້ເຖົ່າຂອງງົວໂຕແມ່ຕ້ອງຊັກເສື້ອຜ້າຂອງຕົນ ແລະລາວຈະເປັນມົນທິນຢູ່ຈົນ
ຮອດຕອນຄ່ຳ ຈະເປັນຢ່າງນີ້ແກ່ຄົນອິສຣາເອນ ແລະແກ່ຄົນຕ່າງດ້າວຜູ້ອາໄສຢູ່ທ່າມກາງພວກ
ເຂົາ ໃຫ້ເປັນກົດເກນຖາວອນ

11ຜູ້ທີ່ແຕະຕ້ອງສົບຂອງຜູ້ໃດກໍຕາມຕ້ອງເປັນມົນທິນຢູ່ເຈັດມື້ 12ໃນມື້ທີສາມ ລາວຕ້ອງຊຳ-
ລະຕົວດ້ວຍນ້ຳ ແລ້ວໃນມື້ທີເຈັດ ລາວຈະສະອາດ ແຕ່ຖ້າລາວບໍ່ຊຳລະຕົວຕະຫລອດໃນມື້ທີ
ສາມ ໃນມື້ທີເຈັດລາວຈະສະອາດບໍ່ໄດ້ 13ຜູ້ໃດແຕະຕ້ອງຄົນຕາຍ ຄືຮ່າງກາຍຂອງຄົນທີ່ຕາຍ
ແລ້ວແລະບໍ່ໄດ້ຊຳລະຕົນ ຜູ້ນັ້ນກໍເຮັດໃຫ້ຫໍເຕັນສັກສິດຂອງພຣະຜູ້ເປັນເຈົ້າມີມົນທິນ ຕ້ອງຕັດ
ຄົນນັ້ນອອກຈາກອິສຣາເອນ ເພາະບໍ່ໄດ້ເອົານ້ຳລ້າງຕົນເອງ ລາວຈະເປັນມົນທິນ ມົນທິນຍັງ
ຄ້າງຢູ່ກັບລາວ

14ຕໍ່ໄປນີ້ແມ່ນກົດບັນຍັດເລື່ອງຄົນຕາຍໃນເຕັນ ທຸກຄົນທີ່ເຂົ້າມາໃນເຕັນ ແລະສາລະພັດທີ່ຢູ່
ໃນເຕັນ ຈະເປັນມົນທິນໄປເຈັດມື້ 15ພາຊະນະທຸກຢ່າງທີ່ບໍ່ມີຝາປິດຕ້ອງເປັນມົນທິນ 16ຄົນໃດທີ່
ແຕະຕ້ອງຄົນທີ່ຖືກດາບຕາຍ ຫລືແຕະຕ້ອງສົບ ຫລືກະດູກຄົນ ຫລືຂຸມສົບຈະເປັນມົນທິນໄປ
ເຈັດມື້

17ສຳລັບຄົນທີ່ເປັນມົນທິນນີ້ ຈົ່ງເອົາຂີ້ເຖົ່າຈາກການເຜົາງົວໂຕແມ່ໃນການບູຊາໄຖ່ບາບ

ແລະເອົານ້ຳມາປົນໃນພາຊະນະ [18]ໃຫ້ຄົນສະອາດເອົາກ້ານຫູສົບຈຸ່ມນ້ຳນັ້ນຊິດໃສ່ເຕັນແລະ
ເຄື່ອງໃຊ້ສອຍທັງໝົດ ແລະເທິງຄົນທີ່ຢູ່ບ່ອນນັ້ນ ແລະເທິງຄົນທີ່ແຕະຕ້ອງກະດູກ ຫລືຄົນຖືກ
ຂ້າ ຫລືຄົນຕາຍ ຫລືຂຸມຝັງສົບ [19]ໃຫ້ຄົນສະອາດຊິດໃສ່ຄົນທີ່ເປັນມົນທິນໃນມື້ທີສາມແລະມື້ທີ
ເຈັດ ເຮັດຢ່າງນີ້ ເມື່ອຮອດມື້ທີເຈັດ ລາວຈະເຮັດໃຫ້ຄົນນັ້ນສະອາດ ແລະລາວຕ້ອງຊັກເສື້ອຜ້າ
ແລະອາບນ້ຳ ເມື່ອຮອດຕອນຄ່ຳລາວກໍຈະສະອາດ [20]ແຕ່ຄົນທີ່ເປັນມົນທິນ ແລະບໍ່ຊຳລະຕົວ
ໃຫ້ຕັດຄົນນັ້ນອອກຈາກທ່າມກາງທີ່ປະຊຸມ ເພາະລາວໄດ້ເຮັດໃຫ້ສະຖານທີ່ບໍລິສຸດຂອງພຣະຜູ້-
ເປັນເຈົ້າເປັນມົນທິນ ຄືບໍ່ໄດ້ເອົານ້ຳລ້າງມົນທິນລາວ ລາວຈຶ່ງຍັງເປັນມົນທິນ

[21]ແລະໃຫ້ເປັນກົດເກນຖາວອນແກ່ພວກເຂົາ ຜູ້ທີ່ຊິດນ້ຳລ້າງມົນທິນຈະຕ້ອງຊັກເສື້ອຜ້າຂອງ
ຕົນ ແລະຜູ້ທີ່ແຕະຕ້ອງນ້ຳລ້າງມົນທິນ ລາວຈະເປັນມົນທິນຈົນຮອດຕອນຄ່ຳ [22]ແລະສິ່ງໃດທີ່ຜູ້
ເປັນມົນທິນແຕະຕ້ອງ ສິ່ງນັ້ນຈະເປັນມົນທິນ ແລະຜູ້ທີ່ແຕະຕ້ອງສິ່ງນັ້ນຈະເປັນມົນທິນຈົນຮອດ
ຕອນຄ່ຳ”

# ບົດທີ 20

## ງົວໂຕແມ່ສີແດງກັບຂີ້ເຖົ່າ

[1]ຕໍ່ມາ ໃນເດືອນທຳອິດ ປະຊາຊົນອິສຣາເອນໄດ້ພາກັນມາຍັງຖິ່ນແຫ້ງແລ້ງກັນດານຊິນ
ແລະຕັ້ງຄ້າຍຢູ່ກາເດັດຊຶ່ງເປັນບ່ອນທີ່ນາງມີຣີອາມ ໄດ້ຕາຍ ແລະຖືກຝັງໄວ້ຢູ່ທີ່ນັ້ນ.

[2]ຢູ່ບ່ອນນັ້ນ ບໍ່ມີນ້ຳກິນ ພວກປະຊາຊົນຈຶ່ງພາກັນມາອ້ອມໂມເຊແລະອາໂຣນ. [3]ພວກເຂົາ
ຈົ່ມທຸກໃສ່ເພິ່ນທັງສອງວ່າ, “ຖ້າວ່າ ພວກຂ້ານ້ອຍຕາຍຢູ່ຕໍ່ໜ້າຫໍເຕັນສັກສິດພ້ອມກັບເພື່ອນ
ຊາວອິສຣາເອນຄົງຈະດີກວ່າ. [4]ເປັນຫຍັງພວກທ່ານຈຶ່ງນຳພວກຂ້ານ້ອຍອອກຈາກປະເທດເອ-
ຢິບ ແລະເຂົ້າມາໃນຖິ່ນແຫ້ງແລ້ງກັນດານນີ້ ເພື່ອໃຫ້ພວກຂ້ານ້ອຍຕາຍໄປພ້ອມທັງຝູງສັດຂອງ
ພວກຂ້ານ້ອຍຊັ້ນບໍ? [5]ຢູ່ບ່ອນນີ້ບໍ່ມີເຂົ້າ ບໍ່ມີຕົ້ນໝາກເດື່ອ ບໍ່ມີຕົ້ນອະງຸ່ນ ບໍ່ມີຕົ້ນໝາກພິລາ
ເລີຍ ແລະແມ່ນແຕ່ນ້ຳຈະດື່ມກໍຍັງບໍ່ມີ.”

[6]ດັ່ງນັ້ນໂມເຊແລະອາໂຣນຈຶ່ງພາກັນຍ່າງໜີຈາກປະຊາຊົນ ແລະໄປຢືນຢູ່ທາງປະຕູເຂົ້າຫໍ-
ເຕັນສັກສິດ ເມື່ອທັງສອງກົ້ມຂາບລົງ ພຣະລັດສະໝີຂອງພຣະຜູ້ເປັນເຈົ້າກໍປະກົດຂຶ້ນແກ່ຄົນ
ທັງສອງ. [7-8]ພຣະຜູ້ເປັນເຈົ້າຊົງກ່າວຕໍ່ໂມເຊວ່າ, “ຈົ່ງຈັບເອົາໄມ້ເທົ້າຢູ່ຕໍ່ໜ້າຫີບຄຳສັນຍານັ້ນ
ແລ້ວເຈົ້າກັບອາໂຣນຈົ່ງໄປຈັດຊຸມນຸມຊົນ ແລະເວົ້າຕໍ່ໜ້າປະຊາຊົນທັງໝົດ ແລະສັ່ງໃຫ້ນ້ຳ
ໄຫລອອກມາຈາກກ້ອນຫີນຢູ່ບ່ອນນັ້ນ ແລ້ວນ້ຳກໍຈະໄຫລອອກມາເພື່ອໃຫ້ປະຊາຊົນດື່ມ ພວກ
ເຂົາພ້ອມທັງຝູງສັດຈຶ່ງຈະມີນ້ຳດື່ມ.”

[9]ໂມເຊຈຶ່ງໄປເອົາໄມ້ເທົ້າຕາມຄຳສັ່ງຂອງພຣະຜູ້ເປັນເຈົ້າ. [10]ຕໍ່ມາ ໂມເຊກັບອາໂຣນກໍຈັດ
ເອົາປະຊາຊົນທັງໝົດໄປຊຸມນຸມຢູ່ຕໍ່ໜ້າໂງ່ນຫີນ ໂມເຊເວົ້າຂຶ້ນວ່າ, “ພວກເຈົ້າຜູ້ເປັນຄົນກະບົດ
ຈົ່ງຟັງເທີ້ນ ພວກເຮົາຈະສາມາດເຮັດໃຫ້ນ້ຳໄຫລອອກຈາກໂງ່ນຫີນນີ້ໄດ້ແທ້ບໍ?” [11]ແລ້ວໂມເຊ
ກໍຕີໂງ່ນຫີນນັ້ນສອງເທື່ອ ນ້ຳໄດ້ໄຫລອອກມາຢ່າງຫລວງຫລາຍ ປະຊາຊົນທຸກຖ້ວນໜ້າ ແລະ
ຝູງສັດກໍພາກັນດື່ມ.

12ແຕ່ພຣະຜູ້ເປັນເຈົ້າຊົງຕຳໜິຕິຕຽນໂມເຊ ແລະອາໂຣນວ່າ, “ຍ້ອນພວກເຈົ້າບໍ່ມີຄວາມເຊື່ອ
ພຽງພໍ ຈຶ່ງບໍ່ສາມາດສະແດງອຳນາດອັນສັກສິດຂອງເຮົາໃຫ້ປະຊາຊົນອິສຣາເອນຮູ້ຈັກ ພວກ
ເຈົ້າຈະບໍ່ໄດ້ນຳພວກເຂົາເຂົ້າໄປໃນແຜ່ນດິນທີ່ເຮົາກຳລັງຈະມອບໃຫ້ນັ້ນ.”
13ເລື່ອງນີ້ເກີດຂຶ້ນທີ່ ເມຣິບາ ບ່ອນທີ່ປະຊາຊົນອິສຣາເອນຈົ່ມທຸກຕໍ່ພຣະຜູ້ເປັນເຈົ້າ ແລະ
ເປັນບ່ອນທີ່ພຣະອົງຊົງສະແດງໃຫ້ພວກເຂົາຮູ້ຈັກວ່າພຣະອົງຜູ້ຊົງບໍລິສຸດ.

## ເຫດການທີ່ເມືອງກາເດັດ

14ໂມເຊໄດ້ສົ່ງທູດນຳຂ່າວຈາກກາເດັດໄປຫາເຈົ້າຊີວິດແຫ່ງ ເອໂດມ ເພື່ອເວົ້າວ່າ, “ນີ້ເປັນ
ຂ່າວມາຈາກປະເທດອ້າຍນ້ອງອິສຣາເອນ ຄືພຣະອົງກໍຮູ້ເຖິງຄວາມຫຍຸ້ງຍາກທີ່ພວກຂ້ານ້ອຍ
ໄດ້ປະສົບພົບພໍ້. 15ແລະທັງຮູ້ວ່າ ດ້ວຍເຫດໃດ ພວກບັນພະບູລຸດຂອງພວກຂ້ານອຍຈຶ່ງໄດ້ໄປຢູ່
ໃນປະເທດ ເອຢິບ ເປັນເວລາຫລາຍປີ ພວກ ເອຢິບ ໄດ້ກົດຂີ່ຂົ່ມເຫັງພວກເພິ່ນ ແລະພວກຂ້າ-
ນ້ອຍ. 16ພວກຂ້ານ້ອຍຈຶ່ງໄດ້ຮ້ອງຂໍຄວາມຊ່ອຍເຫລືອຈາກພຣະຜູ້ເປັນເຈົ້າ ພຣະອົງໄດ້ຍິນຄຳ
ຮ້ອງຂໍຂອງພວກຂ້ານ້ອຍ ພຣະອົງຈຶ່ງໄດ້ສົ່ງທູດສະຫວັນນຳໜ້າພວກຂ້ານ້ອຍອອກມາຈາກປະ-
ເທດເອຢິບ ດຽວນີ້ ພວກຂ້ານ້ອຍໄດ້ຢູ່ທີ່ກາເດັດ ຊຶ່ງເປັນເມືອງທີ່ຢູ່ໃກ້ເຂດແດນຂອງພຣະອົງ.
17ຂໍຄວາມກະລຸນາໃຫ້ພວກຂ້ານ້ອຍຜ່ານປະເທດຂອງພະອົງໄປເທີ້ນ ພວກຂ້ານ້ອຍ ແລະຝູງ
ສັດຈະບໍ່ຢຸດຢູ່ຕາມຖະໜົນຫົນທາງ ຈະບໍ່ລ່ວງເຂົ້າໄປໃນທົ່ງນາ ຫລືສວນອະງຸ່ນ ແລະພວກຂ້າ-
ນ້ອຍຈະບໍ່ດື່ມນໍ້າຈາກສ້າງຂອງພະອົງເລີຍ ພວກຂ້ານ້ອຍຈະເດີນທາງໄປຕາມຫົນທາງຫລວງ
ຈົນກວ່າຈະພົ້ນເຂດແດນຂອງພະອົງໄປ.”
18ແຕ່ພວກເອໂດມຕອບວ່າ, “ພວກເຮົາຈະບໍ່ຍອມໃຫ້ພວກເຈົ້າຜ່ານປະເທດຂອງພວກເຮົາໄປ
ເປັນເດັດຂາດ ຖ້າຫາກວ່າພວກເຈົ້າຍັງຝືນມາ ພວກເຮົາຈະຕໍ່ສູ້ພວກເຈົ້າທັນທີ.” 19ຄົນອິສຣາ-
ເອນໄດ້ເວົ້າວ່າ, “ພວກຂ້ານ້ອຍຈະພາກັນໄປຕາມທາງຫລວງນີ້ ຖ້າຫາກວ່າພວກຂ້ານ້ອຍ ຫລື
ຝູງສັດຂອງພວກຂ້ານ້ອຍຫາກກິນນໍ້າຂອງພວກທ່ານ ພວກຂ້ານ້ອຍຈະໃຊ້ທົດແທນໝົດ ຂໍແຕ່
ໃຫ້ພວກຂ້ານ້ອຍໄດ້ຜ່ານໄປເທົ່ານັ້ນ.”
20ພວກເອໂດມກໍຍັງເວົ້າອີກວ່າ, “ພວກເຮົາບໍ່ຍອມໃຫ້ພວກເຈົ້າຜ່ານໄປຢ່າງເດັດຂາດ” ແລ້ວ
ພວກເຂົາກໍຍົກທັບທີ່ໃຫຍ່ ແລະເຂັ້ມແຂງອອກມາເພື່ອຈະຕໍ່ສູ້ພວກອິສຣາເອນ. 21ພວກອິສຣາ-
ເອນຈຶ່ງໄດ້ກັບຄືນ ແລະໄປຕາມເສັ້ນທາງອື່ນ.

## ເຈົ້າຊີວິດເມືອງເອໂດມ ບໍ່ຍອມໃຫ້ພວກອິສຣາເອນຜ່ານໄປ

22ພວກຊຸມນຸມຊົນອິສຣາເອນທັງໝົດໄດ້ເດີນທາງອອກຈາກກາເດັດ ແລະໄດ້ມາຮອດພູໂຮເຣ
ໃກ້ເຂດແດນເມືອງເອໂດມ. 23ຢູ່ບ່ອນນີ້ພຣະຜູ້ເປັນເຈົ້າຊົງກ່າວຕໍ່ອາໂຣນ ແລະ ໂມເຊວ່າ,
24“ອາໂຣນຈະບໍ່ໄດ້ເຂົ້າໄປໃນແຜ່ນດິນທີ່ເຮົາກຳລັງຈະມອບໃຫ້ຊາວອິສຣາເອນນັ້ນ ອາໂຣນຈະ
ຕ້ອງຕາຍ ເພາະວ່າຢູ່ເທິງເມືອງເມຣິບານັ້ນ ເຈົ້າທັງສອງໄດ້ກະບົດຕໍ່ສູ້ຄຳສັ່ງຂອງເຮົາ. 25ຈົ່ງ
ພາອາໂຣນ ແລະເອເລອາຊາ ລູກຊາຍຂອງລາວຂຶ້ນໄປເທິງພູໂຮເຣ 26ແລະໃຫ້ແກ້ເສື້ອປະຈຳ
ຕຳແໜ່ງຂອງລາວອອກ ແລ້ວເອົາໄປນຸ່ງໃຫ້ເອເລອາຊາ ເພາະອາໂຣນຈະເສຍຊີວິດຢູ່ບ່ອນ

ນັ້ນ."
27ສ່ວນ ໂມເຊ ກໍປະຕິບັດຕາມທີ່ ພຣະຜູ້ເປັນເຈົ້າ ຊົງສັ່ງ ດັ່ງນັ້ນ ທັງສອງ ຈຶ່ງພາກັນຂຶ້ນໄປ
ເທິງພູ ໂຮເຣ ທ່າມກາງສາຍຕາຂອງຊຸມນຸມຊົນທັງໝົດ. 28ໂມເຊ ໄດ້ແກ້ເສື້ອຂອງ ອາໂຣນ ອອກ
ແລະນຸ່ງໃຫ້ ເອເລອາຊາ ອາໂຣນ ໄດ້ຕາຍຢູ່ເທິງຈອມພູນັ້ນ ແລ້ວ ໂມເຊ ກັບ ເອເລອາຊາ ກໍກັບລົງ
ມາ. 29ເມື່ອຊຸມນຸມຊົນທັງໝົດຮູ້ວ່າ ອາໂຣນ ໄດ້ຕາຍໄປແລ້ວ ພວກເຂົາທັງໝົດກໍພາກັນໄວ້ທຸກ
ໃຫ້ເພິ່ນເປັນເວລາສາມສິບມື້.

# ບົດທີ 21

## ອາໂຣນເສຍຊີວິດ

1ເມື່ອເຈົ້າຊີວິດ ອາຣັດ ຄົນ ການາອານ ຊຶ່ງປົກຄອງຢູ່ພາກໃຕ້ຂອງປະເທດໄດ້ຍິນວ່າ ຊາວ
ອິສຣາເອນ ກຳລັງມາທາງ ອາທາຣິມ ພະອົງກໍອອກໄປໂຈມຕີ ແລະຈັບເອົາພວກ ອິສຣາເອນ
ບາງຄົນມາເປັນຊະເລີຍ.
2ແລ້ວພວກ ອິສຣາເອນ ກໍສາບານຕໍ່ ພຣະຜູ້ເປັນເຈົ້າ ວ່າ, "ຖ້າພຣະອົງອະນຸຍາດໃຫ້ພວກຂ້າ-
ນ້ອຍຕີຊະນະພວກເຫລົ່ານີ້ ພວກຂ້ານ້ອຍກໍຈະຂໍອຸທິດຖວາຍພວກເຂົາພ້ອມທັງຫົວເມືອງຕ່າງໆ
ໃຫ້ພຣະອົງ ແລະຈະທຳລາຍພວກເຂົາທັງໝົດ." 3ພຣະຜູ້ເປັນເຈົ້າ ຊົງສະດັບຮັບຟັງ ແລະຊ່ອຍ
ເຫລືອພວກເຂົາໃຫ້ຕີຊະນະພວກ ການາອານ ດ້ວຍເຫດນີ້ ຊາວ ອິສຣາເອນ ຈຶ່ງໄດ້ທຳລາຍພວກ
ເຂົາກັບຫົວເມືອງຕ່າງໆ ແລ້ວບ່ອນນີ້ຈຶ່ງມີຊື່ວ່າ ໂຮມາ.

## ໄຊຊະນະຕໍ່ພວກການາອານ

4ຊາວ ອິສຣາເອນ ໄດ້ອອກຈາກພູ ໂຮເຣ ໄປຕາມທາງສູ່ທະເລແດງ ເມື່ອກຳລັງຍ່າງອ້ອມເຂດ
ແດນ ເອໂດມ ໄປນັ້ນ ພວກເຂົາເລີຍໝົດຄວາມອົດທົນ. 5ພວກເຂົາຈຶ່ງຈົ່ມທຸກຕໍ່ ພຣະເຈົ້າ ແລະ
ໂມເຊ ວ່າ, "ເຫດໃດໜໍ ທ່ານຈຶ່ງນຳພວກຂ້ານ້ອຍອອກມາຈາກປະເທດ ເອຢິບ ເພື່ອມາຕາຍໃນ
ຖິ່ນແຫ້ງແລ້ງກັນດານແຫ່ງນີ້ ຊຶ່ງເປັນບ່ອນທີ່ບໍ່ມີອາຫານ ແລະນ້ຳ ພວກຂ້ານ້ອຍບໍ່ອາດທົນກິນ
ອາຫານເຊັ່ນນີ້ອີກໄດ້ດອກ."
6ດັ່ງນັ້ນ ພຣະຜູ້ເປັນເຈົ້າ ຈຶ່ງຊົງສົ່ງງູພິດມາໃນທ່າມກາງຊາວ ອິສຣາເອນ ໄດ້ມີຫລາຍຄົນຖືກ
ງູຕອດ ແລະຕາຍໄປ. 7ແລ້ວປະຊາຊົນໄດ້ພາກັນມາເວົ້າຕໍ່ ໂມເຊ ວ່າ, "ເວລາທີ່ຂ້ານ້ອຍໄດ້ຈົ່ມ
ທຸກຕໍ່ ພຣະຜູ້ເປັນເຈົ້າ ແລະຕໍ່ທ່ານນັ້ນ ພວກຂ້ານ້ອຍໄດ້ເຮັດບາບແລ້ວ ແລະບັດນີ້ຂໍໃຫ້ທ່ານ
ອ້ອນວອນຂໍໃຫ້ ພຣະຜູ້ເປັນເຈົ້າ ຊົງ ເອົາງູ ເຫລົ່ານີ້ອອກໜີໄປເສຍ" ແລ້ວ ໂມເຊ ກໍອ້ອນວອນຕໍ່
ພຣະຜູ້ເປັນເຈົ້າ ເພື່ອພວກເຂົາ.
8ພຣະຜູ້ເປັນເຈົ້າ ຈຶ່ງບອກ ໂມເຊ ໃຫ້ເອົາທອງມາເຮັດເປັນຮູບງູ ແລ້ວເອົາໄປໄວ້ເທິງກົກເສົາ
ເພື່ອວ່າເມື່ອມີຄົນໃດຖືກງູຕອດ ກໍຈະໄດ້ຫລຽວເບິ່ງຮູບງູນັ້ນ ແລະຈະບໍ່ຕາຍ. 9ໂມເຊກໍໄດ້ເຮັດ
ຮູບງູທອງ ແລະເອົາໄວ້ເທິງກົກເສົາ ເມື່ອຜູ້ທີ່ຖືກງູຕອດຫລຽວເບິ່ງງູທອງນັ້ນ ກໍຈະບໍ່ຕາຍ.
10ແລະຄົນ ອິສຣາເອນ ກໍຍົກຍ່າງອອກໄປຕັ້ງຄ້າຍຢູ່ທີ່ ໂອໂບດ 11ແລະພວກເຂົາຍ່າງອອກ
ຈາກ ໂອໂບດ ໄປຕັ້ງຄ້າຍຢູ່ທີ່ ອິເຢ-ອາບາຣິມ ຢູ່ໃນຖິ່ນ ແຫ້ງແລ້ງກັນດານກົງກັນຂ້າມກັບ ໂມ-

ອາບ ທາງທິດຕາເວັນອອກ 12ພວກເຂົາຍົກອອກຈາກບ່ອນນັ້ນມາຕັ້ງຄ້າຍຢູ່ທີ່ຮ່ອມພູ ເຊເຣັດ
13ພວກເຂົາຍົກອອກຈາກບ່ອນນັ້ນໄປຕັ້ງຢູ່ຟາກແມ່ນ້ຳ ອາໂນນ ຂ້າງນັ້ນ ຊຶ່ງຢູ່ໃນຖິ່ນແຫ້ງແລ້ງ
ກັນດານທີ່ຍືດມາຈາກພົມແດນຂອງຄົນ ອະໂມຣິດ ເພາະວ່າແມ່ນ້ຳ ອາໂນນ ເປັນພົມແດນຂອງ
ໂມອາບ ລະຫວ່າງ ໂມອາບ ກັບຄົນ ອະໂມຣິດ 14ດັ່ງນັ້ນ ໃນໜັງສືສົງຄາມຂອງ ພຣະຜູ້ເປັນເຈົ້າ
ຈຶ່ງມີຄຳວ່າ "ພຣະອົງຊົງຊະນະທີ່ທະເລແດງ ແລະລຸ່ມແມ່ນ້ຳອາໂນນ 15ແລະທີ່ທົ່ງພຽງເຫລົ່າ-
ນັ້ນຊຶ່ງຍາວໄປຈົນເຖິງທີ່ຕັ້ງເມືອງ ອາຣະ ແລະຕໍ່ເນື່ອງໄປເຖິງພົມແດນ ໂມອາບ"
16ຈາກບ່ອນນັ້ນ ພວກເຂົາອອກຍ່າງຕໍ່ໄປເຖິງ ເມືອງ ເບເອ ຊຶ່ງເປັນບໍ່ນ້ຳທີ່ ພຣະຜູ້ເປັນເຈົ້າ
ກ່າວກັບ ໂມເຊ ວ່າ "ຈົ່ງລວບລວມປະຊາຊົນເຂົ້ານຳກັນ ເຮົາຈະໃຫ້ນ້ຳແກ່ເຂົາ" 17ແລ້ວ ອິສຣາ-
ເອນ ຈຶ່ງຮ້ອງເພງນີ້ວ່າ "ບໍ່ນ້ຳເອີຍ ຈົ່ງມີນ້ຳພຸ່ງຂຶ້ນມາ ໃຫ້ເຮົາມາຮ້ອງເພງນຳກັນ 18ເປັນບໍ່ນ້ຳທີ່
ເຈົ້ານາຍໄດ້ຂຸດໄວ້ ເປັນບໍ່ທີ່ຂ້າລາຊະການຂອງປະຊາຊົນເຈາະໄວ້ດ້ວຍຕະບອງ ແລະໄມ້ເທົ້າ
ຂອງຜູ້ຊົງຕັ້ງພຣະບັນຍັດ" ແລະຈາກຖິ່ນແຫ້ງແລ້ງກັນດານນັ້ນໄປ ພວກເຂົາກໍມາເຖິງ ມັດຕາ-
ນາ 19ແລະຈາກ ມັດຕານາ ຮອດຕາແສງ ນາຮາລີເອນ ແລະຈາກ ນາຮາລີເອນ ເຖິງຕາແສງ ບາ-
ໂມດ 20ແລະຈາກ ບາໂມດ ເຖິງຮ່ອມພູຊຶ່ງຢູ່ໃນທ້ອງຖິ່ນ ໂມອາບ ຂ້າງຍອດພູ ປີຊະກາ ຊຶ່ງຫລຽວ
ລົງມາເຫັນ ສີໂຮນ
21ແລ້ວ ອິສຣາເອນ ໄດ້ສົ່ງຜູ້ສົ່ງຂ່າວໄປຫາ ສີໂຮນ ກະສັດຄົນ ອະໂມຣິດ ກ່າວວ່າ 22"ຂໍໃຫ້ຂ້າ-
ພະເຈົ້າຜ່ານແຜ່ນດິນຂອງທ່ານ ພວກເຮົາຈະບໍ່ລ້ຽວເຂົ້າໄປໃນນາ ຫລືໃນສວນອະງຸ່ນ ເຮົາຈະບໍ່
ດື່ມນ້ຳຈາກບໍ່ ເຮົາຈະຍ່າງໄປຕາມທາງຫລວງຈົນເຮົາໄດ້ຜ່ານພົມແດນເມືອງຂອງທ່ານ"
23ແຕ່ ສີໂຮນ ບໍ່ຍອມໃຫ້ ອິສຣາເອນ ຍ່າງຜ່ານພົມແດນຂອງຕົນ ສີໂຮນ ລວບລວມພົນທັງໝົດ
ຍົກອອກມາສູ້ຮົບກັບ ອິສຣາເອນ ໃນຖິ່ນແຫ້ງແລ້ງກັນດານ ແລະມາເຖິງ ຢາຮາດ ເພິ່ນຮົບເສິກ
ກັບ ອິສຣາເອນ ຢູ່ບ່ອນນັ້ນ 24ແລະ ອິສຣາເອນ ໄດ້ຂ້າເພິ່ນດ້ວຍຄົມດາບ ຍຶດເອົາແຜ່ນດິນຂອງ
ເພິ່ນ ຈາກ ແມ່ນ້ຳ ອາໂນນ ຈົນຮອດ ແຄວ ຢັບໂບກ ໄກໄປ ຈົນ ເຖິງ ດິນແດນ ຂອງຄົນ ອຳໂມນ
ເພາະວ່າພົມແດນຂອງຄົນ ອຳໂມນ ເຂັ້ມແຂງ 25ແລະ ອິສຣາເອນ ຍຶດເມືອງເຫລົ່ານີ້ທັງໝົດ ແລະ
ເຂົ້າຕັ້ງຢູ່ໃນບັນດາຫົວເມືອງຂອງຄົນ ອະໂມຣິດ ໃນ ເຮັດຊະໂບນ ແລະຕາມຊົນນະບົດທັງໝົດ
26ເພາະວ່າ ເຮັດຊະໂບນ ເປັນເມືອງຫລວງຂອງ ສີໂຮນ ກະສັດຂອງຄົນ ອະໂມຣິດ ຜູ້ທີ່ຕໍ່ສູ້ກັບກະ-
ສັດຊາວ ໂມອາບ ອົງກ່ອນ ແລະຍຶດໄດ້ ແຜ່ນດິນຂອງລາວທັງໝົດໄກໄປຮອດ ແມ່ນ້ຳ ອາໂນນ
27ເພາະສະນັ້ນນັກຮ້ອງບົດສຸພາສິດຈຶ່ງຮ້ອງວ່າ "ມາທີ່ ເຮັດຊະໂບນ ໃຫ້ສ້າງ ແລະສະຖາປະນາ
ເມືອງ ແຫ່ງ ສີໂຮນ ຂຶ້ນ 28ເພາະວ່າມີໄຟອອກໄປຈາກ ເຮັດຊະໂບນ ເປັນແປວໄຟທີ່ອອກໄປຈາກ
ເມືອງ ແຫ່ງ ສີໂຮນ ໄດ້ທຳລາຍເມືອງ ອາຣະ ຂອງ ໂມອາບ ເຈົ້າຂອງແຫ່ງປູຊະນີຍະສະຖານສູງ
ຂອງແມ່ນ້ຳອາໂນນ 29ໂອ ໂມອາບ ເອີຍ ວິບັດແກ່ເຈົ້າ ໂອ ຊົນຊາດແຫ່ງ ພະເຄໂມດ ເອີຍ ເຈົ້າ
ຕ້ອງພິນາດ ພະເຄໂມດ ໄດ້ມອບທັງລູກຊາຍຂອງຕົນທີ່ຫລົບໄພແລ້ວກັບບຸດສາວຂອງຕົນ ໃຫ້
ເປັນຊະເລີຍຂອງ ສີໂຮນ ກະສັດຄົນ ອະໂມຣິດ 30ເຮົາທັງຫລາຍໄດ້ຍິງເຂົາທັງປວງ ເຮັດຊະໂບນ
ພິນາດຈົນເຖິງ ດີໂບນ ເຮົາໄດ້ກວາດລ້າງເຖິງ ໂນຟາ ຄືເຖິງ ເມເດບາ"
31ດັ່ງນັ້ນ ອິສຣາເອນ ໄດ້ອາໄສຢູ່ໃນ ແຜ່ນດິນຄົນ ອະໂມຣິດ 32ແລະ ໂມເຊ ໃຊ້ຄົນໄປສອດ-

ແນມເມືອງຢາເຊ ແລະພວກເຂົາໄດ້ຍຶດເຂດຊົນນະບົດຂອງເມືອງນັ້ນ ແລະຂັບໄລ່ຄົນອະໂມ-
ຣິດທີ່ຢູ່ບ່ອນນັ້ນອອກ
[33]ແລ້ວພວກເຂົາກໍຍົກຍ່າງໄປຕາມທາງເມືອງບາຊານ ແລະໂອກກະສັດເມືອງບາຊານກໍ
ອອກມາ ທັງຕົວເພິ່ນກັບໄພ່ພົນທັງໝົດຂອງເພິ່ນ ເພື່ອສູ້ຮົບກັບພວກເຂົາທີ່ເອັດເຣອີ [34]ແຕ່
ພຣະຜູ້ເປັນເຈົ້າກ່າວກັບໂມເຊວ່າ "ຢ່າຢ້ານພວກເຂົາ ເພາະເຮົາໄດ້ມອບພວກເຂົາໄວ້ໃນມືຂອງ
ເຈົ້າແລ້ວ ທັງບັນດາໄພ່ພົນຂອງພວກເຂົາ ແລະແຜ່ນດິນຂອງພວກເຂົາ ແລະເຈົ້າຈະປະຕິບັດຕໍ່
ພວກເຂົາແບບທີ່ເຈົ້າໄດ້ປະຕິບັດແກ່ສີໂຮນກະສັດຄົນອະໂມຣິດຜູ້ຢູ່ທີ່ເຮັດຊະໂບນ" [35]ດັ່ງນັ້ນ
ພວກເຂົາຈຶ່ງຂ້າໂອກ ແລະລູກຊາຍຂອງເພິ່ນ ກັບປະຊາຊົນທັງໝົດຂອງເພິ່ນ ບໍ່ເຫລືອຈັກຄົນ
ເລີຍ ແລ້ວຍຶດເອົາດິນແດນນັ້ນມາປົກຄອງ.

# ບົດທີ 22

## ງູທອງ

[1]ຊາວອິສຣາເອນໄດ້ເຄື່ອນຍ້າຍໄປຕັ້ງຄ້າຍຢູ່ຕາມທົ່ງພຽງໂມອາບ ຢູ່ທາງທິດຕາເວັນອອກ
ຂອງແມ່ນໍ້າຢໍແດນ ຊຶ່ງຢູ່ກົງກັນຂ້າມກັບເມືອງ ເຢຣິໂກ. [2-3]ເມື່ອເຈົ້າຊີວິດ ບາລາກ ລູກຊາຍ
ຂອງຊິບໂປໄດ້ເຫັນສິ່ງທີ່ຊາວອິສຣາເອນໄດ້ເຮັດຕໍ່ຊາວອະໂມຣິດ ແລ້ວພະອົງແລະປະຊາຊົນ
ຊາວໂມອາບກໍເກີດມີຄວາມສະທ້ານຢ້ານກົວຊາວອິສຣາເອນ ຍ້ອນວ່າຊາວອິສຣາເອນມີຈຳ-
ນວນຫລວງຫລາຍ.
[4]ຊາວໂມອາບຈຶ່ງເວົ້າຕໍ່ພວກຜູ້ນຳຊາວ ມີດີອານວ່າ, "ໃນບໍ່ຊ້ານີ້ ຝູງຊົນເຫລົ່ານີ້ຈະທຳລາຍ
ທຸກສິ່ງທີ່ຢູ່ອ້ອມເຮົາເໝືອນດັ່ງງົວກິນຫຍ້າຢູ່ຕາມທົ່ງ" ໃນສະໄໝນັ້ນ ບາລາກເປັນເຈົ້າຊີວິດ
ຊາວໂມອາບ. [5]ດັ່ງນັ້ນ ພະອົງຈຶ່ງຈັດສົ່ງຜູ້ນຳຂ່າວໄປຫາ ບາລາອາມ ລູກຊາຍຂອງເບໂອຢູ່
ເມືອງເປໂທໃກ້ແມ່ນໍ້າ ເອຟຣາດ ທີ່ປະເທດອາມາວໃຫ້ລາຍງານຂ່າວຕໍ່ບາລາອາມວ່າ, "ເຈົ້າ
ບາລາກຢາກໃຫ້ທ່ານຮູ້ວ່າ ຊົນຊາດທັງໝົດທີ່ມາຈາກປະເທດເອຢິບນັ້ນໄດ້ຢາຍຢູ່ທຸກໆບ່ອນ
ພວກເຂົາໄດ້ຂູ່ເຂັນວ່າ ຈະຍຶດເອົາປະເທດຂອງພວກເຮົາ. [6]ພວກເຂົາມີຈຳນວນຫລາຍກວ່າ
ພວກເຮົາ ສະນັ້ນ ຂໍໃຫ້ທ່ານມາສາບແຊ່ງພວກເຂົາໃຫ້ພວກເຮົາແດ່ທ້ອນ ບາງທີພວກເຮົາອາດ
ຈະຊະນະພວກເຂົາ ແລະຂັບໄລ່ພວກເຂົາໜີຈາກແຜ່ນດິນນີ້ໄດ້ ເຈົ້າບາລາກຮູ້ດີວ່າຖ້າຕົນກ່າວ
ຄຳອວຍພອນ ປະຊາຊົນກໍຈະໄດ້ພອນ ແຕ່ຖ້າລາວປ້ອຍດ່າ ປະຊາຊົນກໍຈະຖືກປ້ອຍດ່າເຊັ່ນ
ກັນ."
[7]ແລ້ວພວກຜູ້ນຳຊາວໂມອາບ ກັບຊາວມີດີອານກໍອອກເດີນທາງໄປຫາບາລາອາມ ພ້ອມ
ທັງເງິນຄ່າພິທີສາບແຊ່ງໄປນຳ ແລະລາຍງານຄຳເວົ້າຂອງບາລາກຕໍ່ເພິ່ນ. [8]ແລ້ວບາລາອາມ
ຈຶ່ງເວົ້າຕໍ່ພວກນີ້ວ່າ, "ຈົ່ງພາກັນນອນຄ້າງຄືນຢູ່ນີ້ສາກ່ອນ ແລ້ວມື້ອື່ນ ຂ້າພະເຈົ້າຈະບອກໃຫ້
ພວກທ່ານຮູ້ວ່າ ພຣະຜູ້ເປັນເຈົ້າຊົງກ່າວຢ່າງໃດຕໍ່ຂ້າພະເຈົ້າ" ດັ່ງນັ້ນ ພວກຜູ້ນຳຊາວໂມອາບ
ຈຶ່ງພັກຢູ່ກັບ ບາລາອາມ. [9]ພຣະເຈົ້າຊົງສະເດັດມາຖາມບາລາອາມວ່າ, "ພວກທີ່ມາພັກກັບ
ເຈົ້ານັ້ນແມ່ນໃຜ?" [10]ບາລາອາມກໍຕອບວ່າ, "ເຈົ້າບາລາກແຫ່ງປະເທດໂມອາບໄດ້ສົ່ງພວກນີ້

ມາບອກຂ້ານ້ອຍວ່າ, 11ພວກທີ່ມາຈາກປະເທດ ເອຢິບ ໄດ້ແຜ່ຜາຍອອກໄປທົ່ວທຸກບ່ອນໃນປະ-
ເທດ ເພິ່ນຢາກໃຫ້ຂ້ານ້ອຍປ້ອຍດ່າສາບແຊ່ງຄົນເຫລົ່ານີ້ໃຫ້ເພິ່ນ ເພື່ອວ່າເພິ່ນຈະຕໍ່ສູ້ກັບພວກ
ເຂົາແລະຂັບໄລ່ພວກເຂົາອອກໄດ້.” 12ພຣະເຈົ້າ ຊົງກ່າວຕໍ່ ບາລາອາມ ວ່າ, “ຢ່າໄປກັບພວກນີ້
ແລະຢ່າສາບແຊ່ງປະຊາຊົນ ອິສຣາເອນ ເລີຍ ເພາະວ່າພວກເຂົາມີພອນຂອງເຮົາແລ້ວ.”
13ເຊົ້າມື້ໃໝ່ມາ ບາລາອາມ ຈຶ່ງໄປຫາພວກຜູ້ນຳຂ່າວຂອງ ເຈົ້າ ບາລາກ ແລະ ເວົ້າວ່າ, “ຈົ່ງ
ພາກັນກັບຄືນ ເມືອສາ ເພາະວ່າ ພຣະຜູ້ເປັນເຈົ້າ ບໍ່ໄດ້ອະນຸຍາດໃຫ້ຂ້າພະເຈົ້າໄປກັບທ່ານ.”
14ແລ້ວພວກເຂົາກໍກັບຄືນ ເມືອຫາ ບາລາກ ແລະລາຍງານຕໍ່ພະອົງຕາມທີ່ ບາລາອາມ ປະຕິເສດ
ບໍ່ຍອມມາກັບພວກຕົນ.
15ສ່ວນ ເຈົ້າ ບາລາກ ກໍຈັດສົ່ງພວກຜູ້ນຳຫລາຍຄົນກວ່າເທື່ອທຳອິດ ແລະມີກຽດຕິຍົດສູງ
ກວ່າໄປອີກ. 16ພວກເຫລົ່ານີ້ກໍກັບຄືນໄປລາຍງານຕໍ່ ບາລາອາມ ຕາມຖ້ອຍຄຳຂອງ ບາລາກ ວ່າ,
“ຢ່າປະຕິເສດເລີຍ ຈົ່ງມາຕາມຄຳຮ້ອງຂໍຂອງເຮົາສາ. 17ເຮົາຈະຕອບບຸນ ແທນຄຸນທ່ານໂດຍ
ໃຫ້ທ່ານຮັ່ງມີເປັນດີ ແລະຈະປະຕິບັດທຸກສິ່ງທີ່ທ່ານຮ້ອງຂໍມາ ຂໍກະລຸນາປ້ອຍດ່າສາບແຊ່ງ
ພວກເຫລົ່ານີ້ໃຫ້ເຮົາແດ່ທ້ອນ.”
18ແຕ່ ບາລາອາມ ຕອບວ່າ, “ເຖິງແມ່ນວ່າເຈົ້າ ບາລາກ ຈະມອບເງິນ ມອບຄຳພາຍໃນພະລາ-
ຊະວັງໃຫ້ຂ້າພະເຈົ້າ ຂ້າພະເຈົ້າກໍບໍ່ອາດຂັດຂືນຄຳສັ່ງຂອງ ພຣະຜູ້ເປັນເຈົ້າ ຜູ້ຊົງເປັນ ພຣະ-
ເຈົ້າ ຂອງຂ້າພະເຈົ້າໄດ້ດອກ. 19ແຕ່ຂໍໃຫ້ພວກທ່ານຄ້າງຄືນຢູ່ບ່ອນນີ້ຄືກັບພວກອື່ນໆ ທີ່ເຄີຍມາ
ແລ້ວ ເພື່ອວ່າບາງທີຂ້າພະເຈົ້າຈະໄດ້ຮູ້ຈັກຕື່ມວ່າ ພຣະຜູ້ເປັນເຈົ້າ ຊົງມີສິ່ງອື່ນທີ່ຈະບອກຂ້າ-
ພະເຈົ້າອີກຫລືບໍ່.” 20ແລ້ວໃນຄືນນັ້ນ ພຣະເຈົ້າ ກໍຊົງສະເດັດມາບອກ ບາລາອາມ ວ່າ, “ຖ້າພວກ
ເຫລົ່ານີ້ມາຮ້ອງຂໍໃຫ້ເຈົ້າໄປກັບພວກເຂົາ ເຈົ້າຈົ່ງຕຽມຕົວໄປສາ ແຕ່ຂໍພຽງໃຫ້ເຈົ້າເຮັດຕາມສິ່ງ
ທີ່ເຮົາບອກເທົ່ານັ້ນ.” 21ດັ່ງນັ້ນ ເຊົ້າມື້ໃໝ່ມາ ບາລາອາມ ຈຶ່ງຈັດແຈງເອົາອານໃສ່ຫລັງລໍ ແລະ
ອອກເດີນທາງໄປກັບພວກຜູ້ນຳຊາວ ໂມອາບ.

## ເຈົ້າຊີວິດຊາວໂມອາບສົ່ງຄົນໄປຫາບາລາອາມ

22ພຣະເຈົ້າ ຊົງ ພຣະພິໂລດທີ່ ບາລາອາມ ໄປກັບພວກເຂົາ ໃນຂະນະທີ່ ບາລາອາມ ຂີ່ລໍໄປ
ໂດຍມີຄົນໃຊ້ສອງຄົນ ເປັນຄົນຕິດຕາມໄປນັ້ນ ເທວະດາຂອງ ພຣະຜູ້ເປັນເຈົ້າ ກໍຊົງຢືນຢູ່ກາງ
ທາງ ເພື່ອຂັດຂວາງທາງຍ່າງຂອງເພິ່ນ. 23ເມື່ອໂຕລໍຫລຽວເຫັນເທວະດາຊົງຢືນຖືດາບຢູ່ ມັນກໍ
ແລ່ນໜີອອກຈາກທາງນັ້ນ ໄປທາງທົ່ງນາ ແຕ່ ບາລາອາມ ໄດ້ຕີລໍ ແລະດຶງມັນກັບຄືນມາຫາ
ຫົນທາງໃຫຍ່.
24ຕໍ່ມາອີກ ເທວະດາກໍມາຢືນຢູ່ແຄມທາງລະຫວ່າງສວນອະງຸ່ນ ຊຶ່ງມີກຳແພງຫີນຢູ່ສອງຟາກ
ຂ້າງ. 25ເມື່ອລໍຫລຽວເຫັນເທວະດາມັນກໍເຊເຂົ້າໄປຕຳຝາກຳແພງ ແລະໜີບຕີນຂອງ ບາລາອາມ
ເຂົ້າໃສ່ຝາ ບາລາອາມ ຈຶ່ງຕີລໍອີກເທື່ອໜຶ່ງ.
26ແລ້ວເທວະດາກໍໜີໄປທາງໜ້າອີກ ໄປຢູ່ບ່ອນແຄບໆ ຊຶ່ງໃນບ່ອນນັ້ນບໍ່ມີປ່ອງທາງຈະ
ຜ່ານໄປທາງອື່ນໄດ້ເລີຍ. 27ເທື່ອນີ້ ເມື່ອລໍຫລຽວເຫັນເທວະດາມັນກໍໝູບລົງ ສ່ວນ ບາລາອາມ ກໍ
ແຮງໃຈຮ້າຍ ເພິ່ນເອົາໄມ້ແສ້ຕີຫລັງລໍອີກ.

28ພຣະຜູ້ເປັນເຈົ້າ ຈຶ່ງເຮັດໃຫ້ລໍປາກເປັນ ແລະມັນໄດ້ເວົ້າຕໍ່ ບາລາອາມ ວ່າ, "ທ່ານຈະໃຫ້
ຂ້ານ້ອຍເຮັດຈັ່ງໃດ ເປັນຫຍັງທ່ານຈຶ່ງໄດ້ຂ້ຽນຕີຂ້ານ້ອຍເຖິງສາມເທື່ອ." 29ບາລາອາມ ກໍຕອບ
ວ່າ, "ເພາະວ່າເຈົ້າເຮັດກວນຂ້ອຍ ຖ້າວ່າຂ້ອຍມີດາບ ຂ້ອຍຈະຂ້າເຈົ້າໂລດ." 30ລໍກໍເວົ້າອີກວ່າ,
"ຂ້ານ້ອຍບໍ່ແມ່ນລໍໂຕທີ່ທ່ານເຄີຍຂີ່ມາເລື້ອຍໆ ນັ້ນບໍ? ຂ້ານ້ອຍໄດ້ເຮັດກັບທ່ານແບບນີ້ມາກ່ອນ
ບໍ?" ບາລາອາມ ຈຶ່ງຕອບວ່າ, "ບໍ່ດອກ." 31ພຣະຜູ້ເປັນເຈົ້າກໍເຮັດໃຫ້ ບາລາອາມ ເຫັນເທວະ-
ດາຖືດາບຢືນຢູ່ບ່ອນນັ້ນ ບາລາອາມ ຈຶ່ງກົ້ມຂາບລົງ. 32ເທວະດາໄດ້ຖາມວ່າ, "ເປັນຫຍັງເຈົ້າ
ຈຶ່ງຕີລໍເຈົ້າເຖິງສາມເທື່ອດັ່ງນີ້ ເຮົາມານີ້ເພື່ອຂັດຂວາງເຈົ້າບໍ່ໃຫ້ເດີນທາງໄປທາງນີ້. 33ແຕ່ລໍ
ຂອງເຈົ້າໄດ້ເຫັນເຮົາກ່ອນ ແລະງວກໜ້າໜີໄປທາງອື່ນເຖິງສາມເທື່ອ ຖ້າວ່າມັນບໍ່ເຮັດດັ່ງນັ້ນ
ເຮົາຕ້ອງໄດ້ຂ້າເຈົ້າ ແລະລໍຂອງເຈົ້າກໍຈະຖືກປ່ອຍໄປ." 34ບາລາອາມ ຈຶ່ງເວົ້າວ່າ, "ຂ້ານ້ອຍໄດ້
ເຮັດຜິດແລ້ວ ເພາະຂ້ານ້ອຍບໍ່ຮູ້ມາກ່ອນວ່າພຣະອົງມາຢືນຂວາງທາງຂ້ານ້ອຍ ໃນເມື່ອພຣະອົງ
ຄິດວ່າ ການທີ່ຈະເດີນທາງຕໍ່ໄປເປັນການຜິດ ຂ້ານ້ອຍກໍຈະກັບຄືນເມືອ." 35ແຕ່ເທວະດາບອກ
ວ່າ, "ຈົ່ງເດີນທາງຕໍ່ໄປກັບຄົນເຫລົ່ານີ້ ແຕ່ໃຫ້ເວົ້າຄຳທີ່ເຮົາບອກເຈົ້າໃຫ້ເວົ້າເທົ່ານັ້ນ" ດັ່ງນັ້ນ
ບາລາອາມ ຈຶ່ງອອກເດີນທາງຕໍ່ໄປກັບຜູ້ນຳ ໂມອາບ ຊຶ່ງເຈົ້າ ບາລາກ ໄດ້ຈັດສົ່ງມາ.

## ບາລາອາມແລະລໍຂອງເພິ່ນ

36ເມື່ອ ບາລາກ ຮູ້ວ່າ ບາລາອາມ ກຳລັງມາພົບກໍອອກໄປຕ້ອນຮັບ ເພິ່ນທີ່ ເມືອງ ອາຣະ ຢູ່
ແຄມແມ່ນ້ຳ ອາໂນນ ໃກ້ເຂດແດນ ໂມອາບ. 37ບາລາກ ຈຶ່ງຖາມ ບາລາອາມ ວ່າ, "ເມື່ອເຮົາສົ່ງ
ຄົນໄປຫາທ່ານ ເປັນຫຍັງທ່ານຈຶ່ງບໍ່ມາ? ຫລືທ່ານຄິດວ່າເຮົາບໍ່ສາມາດໃຫ້ເຄື່ອງບັນນາການແກ່
ທ່ານພຽງພໍຊັ້ນບໍ?" 38ບາລາອາມ ຈຶ່ງຕອບວ່າ, "ຂ້ານ້ອຍໄດ້ມານີ້ແລ້ວເດ ແຕ່ວ່າດຽວນີ້ພະອົງບໍ່
ຮູ້ວ່າ ຂ້ານ້ອຍບໍ່ມີອຳນາດຫຍັງໝົດ ຂ້ານ້ອຍເວົ້າໄດ້ພຽງແຕ່ຖ້ອຍຄຳທີ່ ພຣະເຈົ້າ ຊົງບອກໃຫ້
ເວົ້າເທົ່ານັ້ນ." 39ບາລາອາມ ຈຶ່ງໄປເມືອງ ກີຣີອາດ-ຮຸດໂຊດ ກັບ ບາລາກ. 40ຢູ່ເມືອງນີ້ ບາລາກ
ໄດ້ຂ້າງົວ ແລະແກະ ແລ້ວໄດ້ເອົາຊີ້ນບາງສ່ວນໃຫ້ແກ່ບາລາອາມ ກັບພວກຜູ້ນຳທີ່ຢູ່ກັບເພິ່ນ.
41ຕື່ນເຊົ້າມາ ບາລາກ ກໍພາບາລາອາມຂຶ້ນໄປຍັງ (ບາໂມດ-ບາອານ) ຈາກບ່ອນນັ້ນ ເພິ່ນໄດ້
ເຫັນປະຊາຊົນສ່ວນທີ່ຢູ່ໃກ້ທີ່ສຸດ

# ບົດທີ 23

## ບາລາກຕ້ອນຮັບ ບາລາອາມ

1ບາລາອາມ ຈຶ່ງເວົ້າຕໍ່ ບາລາກ ວ່າ, "ຂໍໃຫ້ສ້າງແທ່ນບູຊາເຈັດແທ່ນໃຫ້ຂ້ານ້ອຍແດ່ ແລະໃຫ້
ນຳເອົາງົວເຖິກ ແລະແກະແນວລະເຈັດໂຕມາໃຫ້ຂ້ານ້ອຍ." 2ບາລາກ ໄດ້ປະຕິບັດຕາມຄຳທີ່
ບາລາອາມ ໄດ້ບອກ ທັງສອງໄດ້ຖວາຍບູຊາງົວ ແລະແກະໃສ່ເທິງແທ່ນບູຊາແຕ່ລະແທ່ນ.
3ແລ້ວ ບາລາອາມ ຈຶ່ງເວົ້າຕໍ່ ບາລາກ ວ່າ, "ໃນຂະນະທີ່ຂ້ານ້ອຍໄປເບິ່ງວ່າ ພຣະຜູ້ເປັນເຈົ້າ ຈະ
ມາພົບຫລືບໍ່ນັ້ນ ຂໍໃຫ້ພະອົງຢືນຢູ່ໃກ້ໆ ກັບບ່ອນເຜົາຖວາຍຂອງພະອົງນີ້ເດີ້ ຂ້ານ້ອຍຈະບອກ
ພະອົງທຸກສິ່ງທີ່ ພຣະຜູ້ເປັນເຈົ້າ ຊົງນິມິດໃຫ້ເຫັນ" ດັ່ງນັ້ນ ບາລາອາມ ຈຶ່ງຂຶ້ນໄປບ່ອນສູງໆ
ແລະຮາບພຽງ.

[4]ໃນຂະນະນັ້ນ ພຣະເຈົ້າກໍຊົງສະເດັດມາພົບເພິ່ນ ບາລາອາມຈຶ່ງທູນຕໍ່ພຣະອົງວ່າ, "ຂ້າ-
ນ້ອຍໄດ້ສ້າງແທ່ນບູຊາ ແລະໄດ້ຖວາຍງົວກັບແກະໄວ້ທຸກແທ່ນ." [5]ພຣະຜູ້ເປັນເຈົ້າຊົງຕອບ
ວ່າ, "ຈົ່ງນຳຖ້ອຍຄຳຂອງເຮົາຄືນໄປບອກກັບບາລາກ."

[6]ດັ່ງນັ້ນ ບາລາອາມຈຶ່ງກັບຄືນໄປ ແລະໄດ້ພົບບາລາກກຳລັງຢືນຢູ່ໃກ້ເຄື່ອງເຜົາບູຊາ
ພ້ອມທັງພວກຜູ້ນຳຊາວໂມອາບທຸກຄົນ.

[7]ບາລາອາມໄດ້ເວົ້າຄຳທຳນວາຍນີ້ໂດຍເປັ່ງສຽງຂຶ້ນວ່າ, "ເຈົ້າບາລາກເຈົ້າຊີວິດຂອງຊາວ
ໂມອາບ ໄດ້ພາຂ້າພະເຈົ້າມາຈາກອາຣາມ ຈາກພູທາງທິດຕາເວັນອອກ ພະອົງໄດ້ບອກຂ້າພະ-
ເຈົ້າວ່າ "ຈົ່ງປ້ອຍດ່າສາບແຊ່ງປະຊາຊົນອິສຣາເອນເທີ້ນ. [8]ຂ້າພະເຈົ້າຈະປ້ອຍດ່າໄດ້ຢ່າງໃດ
ໃນເມື່ອພຣະເຈົ້າບໍ່ໄດ້ດ່າ ຫລືວ່າ ຂ້າພະເຈົ້າຈະປະນາມໄດ້ຢ່າງໃດໃນເມື່ອພຣະເຈົ້າບໍ່ໄດ້ຊົງ
ປະນາມ. [9]ເມື່ອຂ້າພະເຈົ້າຢືນຢູ່ເທິງພູສູງ ຂ້າພະເຈົ້າໄດ້ຫລຽວເຫັນພວກອິສຣາເອນ ຂ້າພະ-
ເຈົ້າໄດ້ຫລຽວເຫັນພວກເຂົາຈາກພູນ້ອຍ ພວກເຂົາເປັນຊົນຊາດທີ່ຢູ່ແບບໂດດດ່ຽວ ພວກເຂົາຮູ້
ດີວ່າ ພວກເຂົາໄດ້ຮັບພຣະພອນພິເສດບໍ່ຄືຊາດອື່ນໆ. [10]ລູກຫລານອິສຣາເອນເປັນເໝືອນກັບ
ຂີ້ຝຸ່ນດິນ ມັນມີຫລວງຫລາຍຈົນບໍ່ສາມາດນັບໄດ້ ຂໍໃຫ້ມື້ສຸດທ້າຍຂອງຂ້າພະເຈົ້າເປັນຄືກັບມື້
ສຸດທ້າຍຂອງຜູ້ໜຶ່ງໃນໝູ່ໄພ່ພົນຂອງພວກເຂົາ ຂໍໃຫ້ຂ້າພະເຈົ້າຕາຍຢ່າງມີຄວາມສຸກເໝືອນກັບ
ພວກທ່ຽງທຳເຫລົ່ານີ້."

[11]ແລ້ວບາລາກຈຶ່ງເວົ້າຕໍ່ບາລາອາມວ່າ, "ເປັນຫຍັງເຈົ້າຈຶ່ງເຮັດກັບຂ້ອຍແບບນີ້? ການທີ່
ຂ້ອຍພາເຈົ້າມາບ່ອນນີ້ ບໍ່ແມ່ນວ່າໃຫ້ມາອວຍພອນໃຫ້ພວກສັດຕູຂອງຂ້ອຍ ແຕ່ວ່າ ໃຫ້ມາ
ປ້ອຍດ່າສາບແຊ່ງພວກເຂົາ. [12]ບາລາອາມຈຶ່ງຕອບວ່າ, "ຂ້ານ້ອຍເວົ້າໄດ້ພຽງແຕ່ສິ່ງທີ່ພຣະຜູ້-
ເປັນເຈົ້າຊົງບອກໃຫ້ຂ້ານ້ອຍເວົ້າເທົ່ານັ້ນ."

## ຄຳທຳນວາຍເທື່ອທີສອງຂອງບາລາອາມ

[13]ແລ້ວບາລາກກໍເວົ້າຕໍ່ບາລາອາມອີກວ່າ, "ຈົ່ງໄປບ່ອນອື່ນອີກກັບຂ້ອຍ ແລະເຈົ້າຈະໄດ້
ເຫັນພວກອິສຣາເອນພຽງແຕ່ຈຳນວນໜ້ອຍຄົນເທົ່ານັ້ນ ແລ້ວຂໍໃຫ້ເຈົ້າສາບແຊ່ງພວກເຂົາຢູ່
ບ່ອນນັ້ນ."

[14]ດັ່ງນັ້ນ ບາລາກຈຶ່ງນຳບາລາອາມໄປຍັງທົ່ງນາ ໂຊຟີມ ແລະໄປເທິງຈອມພູ ປີຊະກາ ຢູ່
ບ່ອນນີ້ພະອົງຊົງສ້າງແທ່ນບູຊາເຈັດແທ່ນ ແລະຖວາຍບູຊາງົວກັບແກະໃສ່ແຕ່ລະແທ່ນ. [15]ບາ-
ລາອາມໄດ້ເວົ້າຕໍ່ບາລາກວ່າ, "ຂໍໃຫ້ພະອົງຢືນຢູ່ໃກ້ໆ ກັບເຄື່ອງເຜົາບູຊາຂອງພະອົງນີ້ເດີ້
ແລະຂ້ານ້ອຍຈະໄປເຂົ້າເຝົ້າພຣະເຈົ້າຢູ່ທາງເບື້ອງພຸ້ນ." [16]ພຣະຜູ້ເປັນເຈົ້າຊົງສະເດັດມາພົບ
ບາລາອາມ ແລະບອກຖ້ອຍຄຳທີ່ຈະເວົ້າ ແລ້ວພຣະອົງກໍຊົງສົ່ງບາລາອາມ ນຳຖ້ອຍຄຳກັບ
ຄືນໄປບອກບາລາກ. [17]ດັ່ງນັ້ນ ບາລາອາມຈຶ່ງກັບຄືນໄປ ແລະພົບ ບາລາກ ກຳລັງຢືນຢູ່
ໃກ້ໆ ເຄື່ອງເຜົາບູຊາພ້ອມທັງພວກຜູ້ນຳຊາວໂມອາບທຸກຄົນ ບາລາກໄດ້ຖາມເຖິງຖ້ອຍຄຳທີ່
ພຣະຜູ້ເປັນເຈົ້າຊົງກ່າວໄວ້.

[18]ບາລາອາມຈຶ່ງກ່າວຄຳທຳນວາຍນີ້ໂດຍເປັ່ງສຽງຂຶ້ນວ່າ: "ບາລາກ ລູກຊາຍຂອງຊິບໂປ
ເອີຍ ຈົ່ງມາພີ້ ແລະຟັງຄຳທີ່ຂ້ານ້ອຍຈະກ່າວອອກໄປ. [19]ພຣະເຈົ້າບໍ່ໄດ້ເວົ້າຕົວະເໝືອນດັ່ງ

ມະນຸດ ພຣະອົງບໍ່ແມ່ນມະນຸດທີ່ມັກປ່ຽນໃຈ ທຸກສິ່ງທີ່ພຣະອົງຊົງສັນຍາພຣະອົງກໍຊົງເຮັດຕາມ
ສັນຍາ ພຣະອົງຊົງເວົ້າຫຍັງມັນກໍເປັນໄປຢ່າງນັ້ນ. 20ພຣະເຈົ້າຊົງໃຫ້ຂ້ານ້ອຍເປັນຜູ້ອວຍພອນ
ເມື່ອພຣະອົງຊົງອວຍພອນແລ້ວຂ້ານ້ອຍຈະລຶບລ້າງຄຳອວຍພອນນັ້ນບໍ່ໄດ້.
21ຂ້ານ້ອຍເບິ່ງເຫັນສິ່ງຈະເກີດຂຶ້ນກັບຊາວອິສຣາເອນ ຈະບໍ່ມີຄວາມທຸກຍາກ ຫລືລຳບາກ
ແຕ່ຢ່າງໃດ. ພຣະຜູ້ເປັນເຈົ້າຂອງພວກເຂົາກໍຊົງສະຖິດຢູ່ກັບພວກເຂົາ ແລະພວກເຂົາກໍໄດ້ປະ-
ກາດວ່າ ພຣະອົງຊົງເປັນເຈົ້າຊີວິດຂອງພວກເຂົາ. 22ພຣະເຈົ້າຊົງໄດ້ນຳພວກເຂົາອອກມາຈາກ
ປະເທດເອຢິບ ພຣະອົງຊົງຕໍ່ສູ້ເພື່ອພວກເຂົາເໝືອນດັ່ງຄວາຍປ່າ 23ບໍ່ມີໝໍເວດມົນຄາຖາຜູ້ໃດທີ່
ຈະຕໍ່ສູ້ຊົນຊາດອິສຣາເອນໄດ້ ສະນັ້ນ ປະຊາຊົນຈຶ່ງພາກັນກ່າວເຖິງອິສຣາເອນວ່າ, "ເບິ່ງແມ
ສິ່ງທີ່ພຣະເຈົ້າຊົງເຮັດຕໍ່ອິສຣາເອນ." 24ຊົນຊາດອິສຣາເອນເປັນຄືກັບສິງໂຕຮ້າຍແຮງ ມັນຈະ
ບໍ່ຢຸດນິ້ງຈົນກວ່າໄດ້ຈີກ ແລະກັດສວບ ແລະຈົນກວ່າມັນຈະໄດ້ກິນເລືອດຂອງຜູ້ທີ່ມັນຂ້າເສຍ
ກ່ອນ."
25ແລ້ວບາລາກໄດ້ເວົ້າຕໍ່ບາລາອາມວ່າ, "ຖ້າເຈົ້າປະຕິເສດບໍ່ຍອມປ້ອຍດ່າສາບແຊ່ງປະ-
ຊາຊົນອິສຣາເອນ ກໍຂໍຢ່າໄດ້ອວຍພອນພວກເຂົາ." 26ບາລາອາມໄດ້ຕອບວ່າ, "ຂ້ານ້ອຍເຄີຍ
ບອກພະອົງແລ້ວວ່າ ຂ້ານ້ອຍຈະເຮັດແຕ່ສິ່ງທີ່ພຣະຜູ້ເປັນເຈົ້າຊົງບອກຂ້ານ້ອຍເທົ່ານັ້ນ."

### ຄຳທຳນວາຍເທື່ອທີສອງຂອງບາລາອາມ

27ບາລາກໄດ້ເວົ້າວ່າ, "ຈົ່ງມາກັບຂ້ອຍ ແລະຂ້ອຍຈະພາເຈົ້າໄປບ່ອນອື່ນອີກ ບາງທີ່ພຣະ-
ເຈົ້າຈະຊົງອະນຸຍາດໃຫ້ເຈົ້າປ້ອຍດ່າສາບແຊ່ງພວກເຂົາໃນບ່ອນນັ້ນ." 28ດັ່ງນັ້ນ ພະອົງຈຶ່ງພາ
ບາລາອາມໄປເທິງຈອມພູເປໂອ ຊຶ່ງເປັນບ່ອນທີ່ຫລຽວເຫັນຖິ່ນແຫ້ງແລ້ງກັນດານໄດ້. 29ບາ-
ລາອາມໄດ້ເວົ້າຕໍ່ບາລາກວ່າ, "ຈົ່ງສ້າງແທ່ນບູຊາໃຫ້ຂ້ານ້ອຍເຈັດແທ່ນ ແລະນຳເອົາງົວກັບ
ແກະມາໃຫ້ຂ້ານ້ອຍແນວລະເຈັດໂຕ." 30ບາລາກກໍປະຕິບັດຕາມຄຳບອກກ່າວ ແລະໄດ້ຖວາຍ
ບູຊາງົວກັບແກະໄວ້ເທິງແທ່ນບູຊາແຕ່ລະແທ່ນ.

## ບົດທີ 24

1ໃນເທື່ອນີ້ ບາລາອາມຮູ້ວ່າ ພຣະຜູ້ເປັນເຈົ້າຢາກໃຫ້ເພິ່ນອວຍພອນພວກອິສຣາເອນ ສະ-
ນັ້ນ ເພິ່ນຈຶ່ງບໍ່ໄດ້ໄປເບິ່ງໂຊກເບິ່ງລາງຕາມທີ່ໄດ້ເຄີຍປະຕິບັດມາ. 2ເພິ່ນຈ້ອງເບິ່ງໄປທາງຖິ່ນ
ແຫ້ງແລ້ງກັນດານ ແລະເຫັນຊາວອິສຣາເອນຕັ້ງຄ້າຍຢູ່ເປັນເຜົ່າເປັນຕະກູນ ພຣະວິນຍານບໍ-
ລິສຸດຂອງພຣະເຈົ້າ ຊົງສະຖິດລົງມາເທິງເພິ່ນ. 3ເພິ່ນຈຶ່ງກ່າວຄຳທຳນວາຍວ່າ, "ຕໍ່ໄປນີ້ ແມ່ນ
ຖ້ອຍຄຳຂອງບາລາອາມ ລູກຊາຍຂອງເບໂອ ຊຶ່ງເປັນຄຳເວົ້າຂອງຜູ້ທີ່ຮູ້ແຈ້ງເຫັນຈິງຄື: 4ຂ້າ-
ພະເຈົ້າໄດ້ຍິນຄຳທີ່ພຣະອົງຊົງກ່າວ ໄດ້ເຫັນນິມິດມາຈາກພຣະຜູ້ເປັນເຈົ້າອົງຍິ່ງໃຫຍ່ ດ້ວຍຕາ
ທີ່ເປີດຢູ່. 5ຕູບຜ້າເຕັນຂອງອິສຣາເອນກໍສວຍງາມ. 6ຄືກັບແຖວຕົ້ນຕານອັນຍາວຢຽດ ຫລື
ສວນທີ່ຢູ່ແຄມແມ່ນໍ້າ ເໝືອນດັ່ງຕົ້ນໄມ້ຫອມທີ່ພຣະຜູ້ເປັນເຈົ້າຊົງປູກໄວ້ ຫລືຕົ້ນສົນທີ່ຢູ່ໃກ້ແມ່-
ນໍ້າ. 7ກອງທັບອິສຣາເອນເຮັດໃຫ້ຊົນຊາດທັງຫລາຍສັ່ນສະທ້ານ ອິສຣາເອນປົກຄອງຫລາຍ
ຊົນຊາດ. ເຈົ້າຊີວິດຂອງພວກເຂົາຍິ່ງໃຫຍ່ກວ່າພວກ ອັກອາກ ແລະບັນລັງຂອງພຣະອົງຈະ

ຕ້ອງກວ້າງຂວາງ ແລະ ແຜ່ຜາຍຮຸ່ງເຮືອງອອກໄປ. [8]ພຣະເຈົ້າ ຊົງນຳພວກເຂົາອອກມາຈາກ
ປະເທດ ເອຢິບ ພຣະອົງຊົງຕໍ່ສູ້ເພື່ອພວກເຂົາເໝືອນຄວາຍປ່າ ພວກເຂົາສັງຫານສັດຕູ ຫັກກະ-
ດູກ ແລະຫັກລູກໜ້າທະນູຂອງພວກເຂົາ. [9]ຊົນຊາດນີ້ເປັນເໝືອນສິງໂຕຮ້າຍແຮງ ເມື່ອເວລາ
ມັນນອນຫລັບບໍ່ມີໃຜກ້າປຸກ ຜູ້ທີ່ອວຍພອນ ອິສຣາເອນ ຈະໄດ້ຮັບຄຳອວຍພອນຕອບ ແລະຜູ້ທີ່
ສາບແຊ່ງ ອິສຣາເອນ ຈະຖືກສາບແຊ່ງຕອບ."

[10]ບາລາກ ລຸກຢືນຂຶ້ນ ກຳກຳປັ້ນດ້ວຍຄວາມໂກດຮ້າຍ ແລະເວົ້າຕໍ່ ບາລາອາມ ວ່າ, "ຂ້ອຍ
ເອີ້ນເຈົ້າມານີ້ ເພື່ອໃຫ້ປ້ອຍດ່າສາບແຊ່ງສັດຕູຂອງຂ້ອຍ ແຕ່ວ່າ ທັງສາມເທື່ອເຈົ້າໄດ້ອວຍ-
ພອນໃຫ້ພວກເຂົາແທນທີ່ຈະປ້ອຍດ່າ. [11]ບັດນີ້ ຈົ່ງກັບຄືນເມືອສາ ຂ້ອຍສັນຍາວ່າຈະໃຫ້ລາ-
ງວັນແກ່ເຈົ້າ ແຕ່ດຽວນີ້ ພຣະຜູ້ເປັນເຈົ້າບໍ່ອະນຸຍາດໃຫ້ເຈົ້າຮັບລາງວັນນີ້."

[12]ບາລາອາມ ຈຶ່ງຕອບວ່າ, "ຂ້ານ້ອຍໄດ້ບອກພວກທີ່ສົ່ງຂ່າວທີ່ພະອົງສົ່ງໄປຫາຂ້ານ້ອຍແລ້ວ
ວ່າ, [13]"ແມ່ນແຕ່ພະອົງຈະເອົາເງິນຄຳທັງໝົດໃນພະລາຊະວັງມາໃຫ້ແກ່ຂ້ານ້ອຍ ຂ້ານ້ອຍກໍບໍ່
ສາມາດເຮັດຫຍັງໄດ້ ຖ້າຫາກສິ່ງນັ້ນ ເປັນການຂັດຂືນຕໍ່ຄຳສັ່ງຂອງ ພຣະຜູ້ເປັນເຈົ້າ ຂ້ານ້ອຍ
ເວົ້າໄດ້ພຽງແຕ່ຖ້ອຍຄຳທີ່ ພຣະຜູ້ເປັນເຈົ້າ ຊົງບອກໃຫ້ເວົ້າເທົ່ານັ້ນ."

## ບາລາອາມທຳນວາຍເທື່ອທີສາມ

[14]ບາລາອາມ ເວົ້າຕໍ່ ບາລາກ ວ່າ, "ເວລານີ້ຂ້ານ້ອຍຈະກັບຄືນ ເມືອບ້ານ ເມືອງຂອງຂ້ານ້ອຍ
ແລ້ວ ແຕ່ວ່າ ກ່ອນຂ້ານ້ອຍຈະໄປ ຂ້ານ້ອຍຢາກຈະເຕືອນພະອົງໃນສິ່ງທີ່ຊາວ ອິສຣາເອນ ຈະ
ປະຕິບັດຕໍ່ປະຊາຊົນຂອງພະອົງໃນພາຍໜ້າ."

[15]ແລ້ວ ບາລາອາມ ກໍເວົ້າຄຳທຳນວາຍວ່າ: "ຕໍ່ໄປນີ້ ແມ່ນຖ້ອຍຄຳຂອງ ບາລາອາມ ລູກຊາຍ
ຂອງ ເບໂອ ເປັນຄຳເວົ້າຂອງຜູ້ທີ່ຮູ້ແຈ້ງເຫັນຈິງ. [16]ຜູ້ທີ່ໄດ້ຍິນຖ້ອຍຄຳຂອງ ພຣະຜູ້ເປັນເຈົ້າ
ແລະຍອມຮັບເອົາສະຕິປັນຍາຂອງຜູ້ສູງສຸດ ຂ້ານ້ອຍໄດ້ເຫັນນິມິດທີ່ມາຈາກ ພຣະຜູ້ເປັນເຈົ້າອົງ
ຍິ່ງໃຫຍ່ ດ້ວຍສາຍຕາທີ່ເປີດຢູ່. [17]ຂ້ານ້ອຍຫລຽວເຫັນອານາຄົດຂ້າງໜ້າ ແລະເຫັນຊົນຊາດ ອິ-
ສຣາເອນ ຈະມີເຈົ້າຊີວິດອັນຮຸ່ງເຮືອງ ເໝືອນດັ່ງດາວທີ່ເກີດຂຶ້ນມາໃນທ່າມກາງຊົນຊາດນີ້ ຜູ້ນີ້
ຈະເປັນ ເໝືອນ ເຄື່ອງໝາຍ ແຫ່ງອຳນາດທີ່ມາຈາກ ອິສຣາເອນ ພະອົງຈະທຸບຕີພວກຜູ້ນຳຊາວ
ໂມອາບ. ຈະທຳລາຍພວກທີ່ຈອງຫອງ ແລະຮ້າຍກາດທຸກຄົນ. [18]ພະອົງຈະຕີຊະນະສັດຕູຂອງ
ພະອົງທີ່ ເມືອງ ເອໂດມ ແລະຈະຍຶດເອົາແຜ່ນດິນຂອງພວກເຂົາມາເປັນຊັບສົມບັດຂອງພະອົງ
ໃນ ໄລຍະທີ່ພວກ ອິສຣາເອນ ເຮັດສົງຄາມຢ່າງມີໄຊນັ້ນ. [19]ຊົນຊາດ ອິສຣາເອນ ຈະຢຽບພວກ
ເຂົາລົງ ແລະຈະທຳລາຍພວກທີ່ລອດຕາຍໃຫ້ໝົດສິ້ນ."

[20]ແລ້ວ ບາລາອາມ ໄດ້ເຫັນພວກ ອາມາເລັກ ທາງນິມິດ ເພິ່ນຈຶ່ງທຳນວາຍວ່າ, "ຊາວ ອາ-
ມາເລັກ ເປັນຊົນຊາດທີ່ມີອຳນາດກວ່າຊາດໃດໆ ແຕ່ວ່າ ຊົນຊາດນີ້ຈະຖືກທຳລາຍໃຫ້ດັບສູນ
ໄປໃນບັ້ນປາຍ."

[21]ຕໍ່ມາ ບາລາອາມ ກໍເຫັນພວກ ເກນີ ທາງນິມິດອີກ ເພິ່ນຈຶ່ງທຳນວາຍວ່າ, "ບ່ອນທີ່ພວກ
ທ່ານຢູ່ນັ້ນແໜ້ນໜາຖາວອນ ແລະປອດໄພເໝືອນດັ່ງຮັງນົກຢູ່ເທິງໜ້າຜາ. [22]ແຕ່ວ່າ ຊາວ ກາ-
ອີນ ເອີຍ ເຈົ້າຈະຖືກທຳລາຍ ເມື່ອຊາວ ອັດຊີເຣຍ ມາຍຶດຄອງເອົາພວກເຈົ້າ."

23ບາລາອາມ ໄດ້ທຳນວາຍວ່າ: ແມ່ນປະຊາຊົນໃດທີ່ທ້ອນໂຮມກັນທາງພາກເໜືອນັ້ນ.
24ພວກທີ່ຢຽບທຳລາຍຈະລົງມາຈາກກິດຕິມ ພວກເຂົາຈະຊະນະຊາວອັດຊີເຣຍ ແລະເຮເບ
ແຕ່ວ່າ ພວກເຫລົ່ານີ້ຈະດັບສູນໄປໃນທີ່ສຸດ.”
25ແລ້ວ ບາລາອາມໄດ້ເດີນທາງກັບເມືອບ້ານ ສ່ວນບາລາກໄດ້ເດີນທາງໄປທາງອື່ນ.

# ບົດທີ 25

## ບາລາອາມທຳນວາຍເທື່ອສຸດທ້າຍ

1ເມື່ອອິສຣາເອນພັກຢູ່ໃນເມືອງຊິດຕິມ ປະຊາຊົນກໍໄດ້ເລີ້ມຫລິ້ນຊູ້ກັບຍິງຊາວໂມອາບ
2ຍິງເຫລົ່ານີ້ກໍເຊີນປະຊາຊົນໃຫ້ໄປບູຊາຕໍ່ພະຂອງນາງ ປະຊາຊົນກໍຮັບປະທານ ແລະຂາບໄຫວ້
ພະຂອງພວກນາງ 3ດັ່ງນັ້ນອິສຣາເອນກໍເຂົ້າຖືພະບາອານແຫ່ງເປໂອ ແລະພຣະຜູ້ເປັນເຈົ້າກໍ
ຊົງພຣະພິໂລດຕໍ່ອິສຣາເອນ
4ພຣະຜູ້ເປັນເຈົ້າຊົງກ່າວກັບໂມເຊວ່າ “ຈົ່ງນຳຫົວໜ້າທັງຫລາຍຂອງປະຊາຊົນແຂວນຕາກ-
ແດດໄວ້ຕໍ່ພຣະພັກພຣະຜູ້ເປັນເຈົ້າ ເພື່ອວ່າພຣະພິໂລດອັນຮ້າຍແຮງຂອງພຣະຜູ້ເປັນເຈົ້າຈະ
ຫັນເຫໄປຈາກອິສຣາເອນ” 5ແລະໂມເຊບອກພວກຜູ້ພິພາກສາຂອງອິສຣາເອນວ່າ “ທ່ານທຸກ
ຄົນຈົ່ງຂ້າຄົນຂອງທ່ານທີ່ເຂົ້າຖືພະບາອານແຫ່ງເປໂອ”
6ແລະເບິ່ງແມ ມີຊາຍອິສຣາເອນຄົນໜຶ່ງພາຍິງຄົນມີດີອານຄົນໜຶ່ງເຂົ້າມາໃນຄອບຄົວຕໍ່ໜ້າ
ຕໍ່ຕາຂອງໂມເຊ ແລະຕໍ່ຊຸມນຸມຊົນທັງໝົດຂອງອິສຣາເອນໃນຂະນະທີ່ພວກເຂົາກຳລັງຮ້ອງໄຫ້
ຢູ່ໜ້າປະຕູຫໍເຕັນສັກສິດແຫ່ງຊຸມນຸມ 7ຄັນຟີເນຮາດລູກຊາຍເອເລອາຊາລູກຊາຍຂອງອາໂຣນ
ເຫັນດັ່ງນັ້ນກໍລຸກຂຶ້ນໄປຈາກຊຸມນຸມຊົນ ມືຖືຫອກ 8ຕິດຕາມຊາຍອິສຣາເອນຄົນນັ້ນເຂົ້າໄປໃນ
ເຕັນ ແລະແທງຊອດພວກເຂົາທັງສອງຄົນ ທັງຊາຍອິສຣາເອນແລະຍິງຄົນນັ້ນ ທ້ອງຂອງນາງ
ກໍຊອດອອກ ແລ້ວໄພພິບັດໃນຄົນອິສຣາເອນກໍສະຫງົບ 9ແຕ່ຢ່າງໃດກໍຕາມ ຄົນທີ່ຕາຍດ້ວຍ
ໄພພິບັດມີສອງໝື່ນສີ່ພັນຄົນ
10ພຣະຜູ້ເປັນເຈົ້າກ່າວກັບໂມເຊວ່າ 11“ຟີເນຮາດ ລູກຊາຍເອເລອາຊາລູກຊາຍອາໂຣນໄດ້
ຫ້າມຄວາມໂກດຮ້າຍຂອງເຮົາຕໍ່ຄົນອິສຣາເອນ ໃນການທີ່ພວກເຂົາມີຄວາມກະຕືລືລົ້ນ ເພາະ
ເຫັນແກ່ເຮົາໃນທ່າມກາງປະຊາຊົນດັ່ງນັ້ນ ເຮົາຈຶ່ງບໍ່ໄດ້ເຜົາຜານຄົນອິສຣາເອນດ້ວຍຄວາມຫຶງ
ຫວງຂອງເຮົາ 12ດັ່ງນັ້ນ ຈົ່ງກ່າວວ່າ ‘ເບິ່ງແມ ເຮົາໃຫ້ຄຳໝັ້ນສັນຍາແກ່ພວກເຂົາ 13ຄຳໝັ້ນ-
ສັນຍານັ້ນຈະເປັນຂອງພວກເຂົາ ແລະເຊື້ອສາຍຂອງພວກເຂົາທີ່ມາພາຍຫລັງເຂົາເຈົ້າ ເປັນ
ຄຳໝັ້ນສັນຍາເລື່ອງຕຳແໜ່ງປະໂລຫິດອັນຖາວອນ ເພາະພວກເຂົາມີຄວາມກະຕືລືລົ້ນຕໍ່ພຣະ-
ເຈົ້າຂອງຕົນ ແລະໄດ້ເຮັດການລຶບລ້າງມົນທິນບາບຄົນອິສຣາເອນ’”
14ຊື່ຂອງຊາຍອິສຣາເອນຄົນທີ່ຖືກຂ້າຮ່ວມກັບຍິງຊາວມີດີອານ ຊື່ຊິມຣີ ລູກຊາຍຂອງສາລູ
ເຈົ້ານາຍຂອງຄອບຄົວສຳຄັນໃນຕະກູນຊີເມໂອນ 15ແລະຊື່ຂອງຍິງຊາວມີດີອານຜູ້ຖືກຂ້າ
ແມ່ນໂກດຊະບີ ບຸດສາວຂອງຊູເຣ ຜູ້ເປັນຫົວໜ້າຕະກູນ ແລະຄອບຄົວສຳຄັນໃນມີດີອານ
16ພຣະຜູ້ເປັນເຈົ້າກ່າວກັບໂມເຊວ່າ 17“ຈົ່ງຮຸກຮານຄົນມີດີອານ ແລະສູ້ຮົບກັບເຂົາ

18ເພາະພວກເຂົາໄດ້ຮຸກຮານເຈົ້າດ້ວຍອຸບາຍ ຊຶ່ງພວກເຂົາລໍ້ເຈົ້າໃນເລື່ອງ ເປໂອ ແລະໃນເລື່ອງ
ນາງ ໂກດຊະບີ ບຸດສາວເຈົ້ານາຍແຫ່ງ ມີດີອານ ຜູ້ເປັນນ້ອງສາວຂອງພວກເຂົາ ຜູ້ທີ່ຖືກຂ້າຕາຍ
ໃນມື້ທີ່ບັງເກີດໄພພິບັດດ້ວຍເລື່ອງ ເປໂອ”

# ບົດທີ 26

## ອິສຣາເອນຂາບໄຫວ້ຮູບເຄົາລົບ ແລະຫລິ້ນຊູ້ກັບຍິງຊາວໂມອາບ

1ຕໍ່ມາ ຫລັງຈາກໄພພິບັດນັ້ນສະຫງົບລົງແລວ ພຣະຜູ້ເປັນເຈົ້າກ່າວກັບ ໂມເຊ ແລະ ເອເລອາ-
ຊາ ລູກຊາຍ ອາໂຣນ ວ່າ 2“ຈົ່ງເຮັດສຳມະໂນຄົວຊຸມນຸມຊົນ ອິສຣາເອນ ທັງໝົດ ອາຍຸຕັ້ງແຕ່ຊາວ
ປີຂຶ້ນໄປຕາມຍາດຕິພີ່ນ້ອງຕາມບັນພະບູລຸດຂອງພວກເຂົາທັງໝົດໃນ ອິສຣາເອນ ຜູ້ທີ່ສາມາດ
ເຂົ້າສົງຄາມໄດ້” 3ໂມເຊ ກັບ ເອເລອາຊາ ປະໂລຫິດ ປາໄສກັບພວກເຂົາທີ່ທົ່ງພຽງ ໂມອາບ ແຄມ
ແມ່ນໍ້າຢໍແດນ ໃກ້ເມືອງ ເຢຣີໂກ ວ່າ 4“ຈົ່ງເຮັດສຳມະໂນຄົວປະຊາຊົນ ອາຍຸຕັ້ງແຕ່ຊາວປີຂຶ້ນໄປ”
ຕາມທີ່ ພຣະຜູ້ເປັນເຈົ້າ ຊົງສັ່ງ ໂມເຊ ແລະຄົນ ອິສຣາເອນ ຜູ້ທີ່ອອກຈາກແຜ່ນດິນ ເອຢິບ ຄື

5ຣູເບັນ ລູກຊາຍຫົວປີຂອງ ອິສຣາເອນ ບຸດຂອງ ຣູເບັນ ຄື ຮາໂນກ ຄົນຄອບຄົວ ຮາໂນກ
ປານລູ ຄົນຄອບຄົວ ປານລູ 6ເຮດຊະໂຣນ ຄົນຄອບຄົວ ເຮດຊະໂຣນ ກາມີ ຄົນຄອບຄົວ ກາມີ
7ຕະກູນ ເຫລົ່ານີ້ ເປັນຄອບຄົວຂອງຄົນ ຣູເບັນ ມີຈຳນວນສີ່ໝື່ນສາມພັນເຈັດຮ້ອຍສາມສິບຄົນ
8ແລະລູກຊາຍຂອງ ປານລູ ຄື ເອລີອາບ 9ລູກຊາຍຂອງ ເອລີອາບ ຄື ເນມູເອນ ດາທານ ແລະ
ອາບີຣາມ ນີ້ຄື ດາທານ ແລະ ອາບີຣາມ ທີ່ເລືອກຈາກຊຸມນຸມຊົນ ເປັນຜູ້ຂັດຂວາງ ໂມເຊ ແລະ ອາ-
ໂຣນ ໃນພັກພວກ ໂກຣາ ຕອນທີ່ພວກເຂົາຂັດຂວາງ ພຣະຜູ້ເປັນເຈົ້າ 10ແລະແຜ່ນທໍລະນີໄດ້ອ້າ
ປາກອອກກືນພວກເຂົາພ້ອມກັບ ໂກຣາ ແລະພັກພວກເຖິງຕາຍ ໂດຍຖືກໄຟເຜົາຜານສອງຮ້ອຍ
ຫ້າສິບຄົນ ແລະພວກເຂົາທັງຫລາຍເປັນເລື່ອງເຕືອນໃຈ 11ແຕ່ບຸດຂອງ ໂກຣານັ້ນບໍ່ຕາຍ

12ລູກຊາຍຂອງ ຊີເມໂອນ ຕາມຄອບຄົວຂອງລາວ ຄື ເນມູເອນ ຄົນຄອບຄົວ ເນມູເອນ ຢາ-
ມິນ ຄົນຄອບຄົວ ຢາມິນ ຢາກິນ ຄົນຄອບຄົວ ຢາກິນ 13ເຊຣາ ຄົນຄອບຄົວ ເຊຣາ ຊາອູນ
ຄົນຄອບຄົວ ຊາອູນ 14ຕະກູນເຫລົ່ານີ້ເປັນຄອບຄົວຂອງຄົນ ຊີເມໂອນ ມີຈຳນວນສອງໝື່ນສອງ
ພັນສອງຮ້ອຍຄົນ

15ບຸດຂອງ ຄາດ ຕາມຄອບຄົວຂອງລາວ ຄື ເຊໂຟນ ຄົນຄອບຄົວ ເຊໂຟນ ຮັກກີ ຄົນ
ຄອບຄົວ ຮັກກີ ຊູນີ ຄົນຄອບຄົວ ຊູນີ 16ໂອດຊະນີ ຄົນຄອບຄົວ ໂອດຊະນີ ເອຣີ ຄົນຄອບຄົວ
ເອຣີ 17ອາໂຣດ ຄົນຄອບຄົວ ອາໂຣດ ອາເຣລີ ຄົນຄອບຄົວ ອາເຣລີ 18ຕະກູນເຫລົ່ານີ້ເປັນ
ຄອບຄົວຂອງບຸດຂອງ ຄາດ ຕາມຈຳນວນຂອງພວກເຂົາມີສີ່ໝື່ນຫ້າຮ້ອຍຄົນ

19ລູກຊາຍຂອງ ຢູດາ ຄື ເອຣະ ແລະ ໂອນານ ເອຣະ ກັບ ໂອນານ ຕາຍໃນ ແຜ່ນດິນ ການາ-
ອານ 20ແລະລູກຊາຍຂອງ ຢູດາ ຕາມຄອບຄົວຂອງລາວ ຄື ເຊລາ ຄົນຄອບຄົວ ເຊລາ ເປເຣັດ
ຄົນຄອບຄົວ ເປເຣັດ ເຊຣາ ຄົນຄອບຄົວ ເຊຣາ. 21ແລະລູກຊາຍຂອງ ເປເຣັດ ຄື ເຮດຊະໂຣນ
ຄົນຄອບຄົວ ເຮດຊະໂຣນ ຮາມູນ ຄົນຄອບຄົວ ຮາມູນ 22ຕະກູນເຫລົ່ານີ້ເປັນຄອບຄົວຂອງ ຢູ-
ດາ ຕາມຈຳນວນຂອງພວກເຂົາມີເຈັດໝື່ນຫົກພັນຫ້າຮ້ອຍຄົນ

23ລູກຊາຍຂອງ ອິດຊາຄາ ຕາມຄອບຄົວຂອງລາວ ຄື ໂຕລາ ຄົນຄອບຄົວ ໂຕລາ ປູວາ ຄົນ
ຄອບຄົວ ປູວາ 24ຢາຊຸບ ຄົນຄອບຄົວ ຢາຊຸບ ຊິມໂຣນ ຄົນຄອບຄົວ ຊິມໂຣນ 25ຕະກູນເຫລົ່ານີ້
ເປັນຄອບຄົວຂອງ ອິດຊາຄາ ຕາມຈຳນວນຂອງພວກເຂົາມີຫົກໝື່ນສີ່ພັນສາມຮ້ອຍຄົນ

26ລູກຊາຍຂອງ ເຊບູລູນ ຕາມຄອບຄົວຂອງລາວ ຄື ເສເຣັດ ຄົນຄອບຄົວ ເສເຣັດ ເອໂລນ
ຄົນຄອບຄົວ ເອໂລນ ຢາເລເອນ ຄົນຄອບຄົວ ຢາເລເອນ 27ຕະກູນເຫລົ່ານີ້ເປັນຄອບຄົວຂອງ
ຄົນ ເຊບູລູນ ຕາມຈຳນວນຂອງພວກເຂົາມີຫົກໝື່ນຫ້າຮ້ອຍຄົນ

28ລູກຊາຍຂອງ ໂຢເຊັບ ຕາມຄອບຄົວຂອງລາວ ຄື ມານາເຊ ແລະ ເອຟຣາຢິມ 29ລູກຊາຍ
ຂອງ ມານາເຊ ຄື ມາກີ ຄົນຄອບຄົວ ມາກີ ມາກີ ໃຫ້ກຳເນີດບຸດຊື່ ກີເລອາດ ກີເລອາດ ຄົນ
ຄອບຄົວ ກີເລອາດ 30ລູກຊາຍຂອງ ກີເລອາດ ຄື ອີເອເຊ ຄົນຄອບຄົວ ອີເອເຊ ເຮເລັກ ຄົນ
ຄອບຄົວ ເຮເລັກ 31ແລະ ອາຊະຣີເອນ ຄົນຄອບຄົວ ອາຊະຣີເອນ ເຊເຄັມ ຄົນຄອບຄົວ ເຊເຄັມ
32ແລະ ເຊມີດາ ຄົນຄອບຄົວ ເຊມີດາ ເຮເຟ ຄົນຄອບຄົວ ເຮເຟ. 33ສ່ວນ ເຊໂລເຟຮາດ ລູກ
ຊາຍ ເຮເຟ. ບໍ່ມີລູກຊາຍມີແຕ່ບຸດສາວ ຊື່ບຸດສາວຂອງ ເຊໂລເຟຮາດ ຄື ມາລາ ໂນອາ ໂຮກ-
ລາ ມີລະກາ ແລະ ຕີຣະຊາ 34ຄົນເຫລົ່ານີ້ເປັນຄອບຄົວ ມານາເຊ ແລະຈຳນວນຂອງພວກເຂົາມີ
ຫ້າໝື່ນສອງພັນເຈັດຮ້ອຍຄົນ

35ຕໍ່ໄປນີ້ເປັນລູກຊາຍຂອງ ເອຟຣາຢິມ ຕາມຄອບຄົວຂອງລາວຄື ຊູເທລາ ຄົນຄອບຄົວ ຊູ-
ເທລາ ເບເຄ. ຄົນຄອບຄົວ ເບເຄ. ຕາຮານ ຄົນຄອບຄົວ ຕາຮານ 36ລູກຊາຍຂອງ ຊູເທລາ ຄື
ເອຣານ ຄົນຄອບຄົວ ເອຣານ 37ຄົນເຫລົ່ານີ້ເປັນຄອບຄົວຂອງລູກຊາຍ ເອຟຣາຢິມ ຕາມຈຳ-
ນວນຂອງພວກເຂົາ ມີສາມໝື່ນສອງພັນຫ້າຮ້ອຍຄົນ ຄົນເຫລົ່ານີ້ແມ່ນລູກຊາຍຂອງ ໂຢເຊັບ
ຕາມຄອບຄົວຂອງລາວ

38ລູກຊາຍຂອງ ເບັນຢາມິນ ຕາມຄອບຄົວຂອງລາວ ຄື ເບລາ ຄົນຄອບຄົວ ເບລາ ອາຊະ-
ເບັນ ຄົນຄອບຄົວ ອາຊະເບັນ ອາຣີຣາມ ຄົນຄອບຄົວ ອາຣີຣາມ 39ເຊຟູຟາມ ຄົນຄອບຄົວ ຊູ-
ຟາມ ຮູຟາມ ຄົນຄອບຄົວ ຮູຟາມ 40ແລະລູກຊາຍຂອງ ເບລາ ຄື ອາດ ແລະ ນາອາມານ ຄົນ
ຄອບຄົວ ອາດ ນາອາມານ ຄົນຄອບຄົວ ນາອາມານ 41ຄົນເຫລົ່ານີ້ເປັນລູກຊາຍຂອງ ເບັນ-
ຢາມິນ ຕາມຄອບຄົວຂອງລາວ ແລະຈຳນວນຂອງພວກເຂົາແມ່ນສີ່ໝື່ນຫ້າພັນຫົກຮ້ອຍຄົນ

42ຕໍ່ໄປນີ້ເປັນລູກຊາຍຂອງ ດານ ຕາມຄອບຄົວຂອງລາວ ຄື ຊູຮາມ ຄົນຄອບຄົວ ຊູຮາມ
ເປັນຄອບຄົວຂອງ ດານ ຕາມຄອບຄົວຂອງລາວ 43ຄອບຄົວທັງໝົດຂອງຄົນ ຊູຮາມ ຕາມຈຳ-
ນວນຂອງພວກເຂົາ ມີຫົກໝື່ນສີ່ພັນສີ່ຮ້ອຍຄົນ

44ບຸດຂອງ ອາເຊ ຕາມຄອບຄົວຂອງລາວ ຄື ອິມນາ ຄົນຄອບຄົວ ອິມນາ ອີຊະວີ ຄົນຄອບ-
ຄົວ ອີຊະວີ ເບຣີອາ ຄົນຄອບຄົວ ເບຣີອາ 45ລູກຊາຍຂອງ ເບຣີອາ ຄື ເຮເບ. ຄົນຄອບຄົວ ເຮ-
ເບ. ມັນກີເອນ ຄົນຄອບຄົວ ມັນກີເອນ 46ບຸດສາວຂອງ ອາເຊ ຄື ເສຣາ 47ຄົນເຫລົ່ານີ້ເປັນ
ຄອບຄົວຂອງລູກຊາຍ ອາເຊ ຕາມຈຳນວນຂອງພວກເຂົາ ມີຫ້າໝື່ນສາມພັນສີ່ຮ້ອຍຄົນ

48ລູກຊາຍຂອງ ນັບທາລີ ຕາມຄອບຄົວຂອງລາວ ຄື ຢາເຊເອນ ຄົນຄອບຄົວ ຢາເຊເອນ ກູນີ
ຄົນຄອບຄົວ ກູນີ 49ເຢດເຊ ຄົນຄອບຄົວ ເຢດເຊ ຊິນເລັມ ຄົນຄອບຄົວ ຊິນເລັມ 50ຄົນເຫລົ່ານີ້

ເປັນຄອບຄົວຂອງ ນັບທາລີ ຕາມຄອບຄົວຂອງລາວ ແລະຕາມຈຳນວນຂອງພວກເຂົາມີສີ່ໝື່ນ
ຫ້າພັນສີ່ຮ້ອຍຄົນ

[51]ຈຳນວນຄົນ ອິສຣາເອນ ມີຫົກແສນໜຶ່ງພັນເຈັດຮ້ອຍສາມສິບຄົນ

[52]ພຣະຜູ້ເປັນເຈົ້າ ກ່າວກັບ ໂມເຊ ວ່າ [53]"ໃຫ້ແບ່ງ ແຜ່ນດິນນັ້ນ ເປັນມໍລະດົກ ແກ່ຄົນ ເຫລົ່ານີ້
ຕາມຈຳນວນລາຍຊື່ [54]ມໍລະດົກສ່ວນໃຫຍ່ກໍໃຫ້ແບ່ງ ແກ່ຄົນຕະກູນໃຫຍ່ ແລະມໍລະດົກສ່ວນ
ນ້ອຍກໍໃຫ້ແບ່ງແກ່ຄົນຕະກູນນ້ອຍ ທຸກຕະກູນຈະໄດ້ຮັບສ່ວນມໍລະດົກຕາມຈຳນວນຄົນ [55]ແຕ່
ໃຫ້ຈັບສະຫລາກແບ່ງແຜ່ນດິນນັ້ນ ໃຫ້ພວກເຂົາໄດ້ຮັບມໍລະດົກຕາມລາຍຊື່ຕະກູນຂອງບັນພະ-
ບູລຸດຂອງພວກເຂົາ [56]ໃຫ້ຈັບສະຫລາກແບ່ງມໍລະດົກຂອງພວກເຂົານັ້ນຕາມສ່ວນຕະກູນໃຫຍ່
ແລະຕະກູນນ້ອຍ"

[57]ຕໍ່ໄປນີ້ເປັນຄົນ ເລວີ ທີ່ນັບຕາມຄອບຄົວຂອງລາວ ຄື ເກໂຊນ ຄົນຄອບຄົວ ເກໂຊນ ໂກ-
ຮາດ ຄົນຄອບຄົວ ໂກຮາດ ເມຣາຣີ ຄົນຄອບຄົວ ເມຣາຣີ [58]ຕໍ່ໄປນີ້ເປັນຄອບຄົວຂອງ ເລວີ ຄື
ຄົນຄອບຄົວ ລິບນີ ຄົນຄອບຄົວ ເຮັບໂຣນ ຄົນຄອບຄົວ ມາລີ ຄົນຄອບຄົວ ມູຊີ ຄົນຄອບຄົວ
ໂກຣາ ແລະ ໂກຮາດ ໃຫ້ກຳເນີດບຸດຊື່ ອຳຣາມ [59]ເມຍຂອງ ອຳຣາມ ຄື ໂຢເກເບັດ ບຸດສາວຂອງ
ເລວີ ເກີດແກ່ ເລວີ ທີ່ ເອຢິບ ແລະນາງເກີດບຸດໃຫ້ ອຳຣາມ ຊື່ ອາໂຣນ ແລະ ໂມເຊ ແລະ ມີຣິ-
ອາມ ເອື້ອຍຂອງພວກເຂົາທັງສອງ [60]ແລະ ອາໂຣນ ໃຫ້ກຳເນີດບຸດຊື່ ນາດາບ ອາບີຮູ ເອເລ-
ອາຊາ. ແລະ ອິທາມາ. [61]ແຕ່ ນາດາບ ແລະ ອາບີຮູ ນັ້ນໄດ້ເສຍຊີວິດ ຕອນທີ່ພວກເຂົາຖວາຍບູ-
ຊາດ້ວຍໄຟທີ່ຕ້ອງຫ້າມຕໍ່ພຣະພັກ ພຣະຜູ້ເປັນເຈົ້າ [62]ແລະຈຳນວນຂອງພວກເຂົາເປັນສອງໝື່ນ
ສາມພັນຄົນ ເປັນຜູ້ຊາຍທຸກຄົນອາຍຸຕັ້ງແຕ່ໜຶ່ງເດືອນຂຶ້ນໄປ ເພາະພວກເຂົາບໍ່ໄດ້ນັບລວມໄວ້
ໃນຄົນ ອິສຣາເອນ ແລະບໍ່ມີມໍລະດົກໃຫ້ແກ່ພວກເຂົາທ່າມກາງຄົນ ອິສຣາເອນ

[63]ຈຳນວນຄົນເຫລົ່ານີ້ ໂມເຊ ແລະປະໂລຫິດ ເອເລອາຊາ ໄດ້ນັບໄວ້ ຕອນທີ່ນັບຄົນ ອິສຣາເອນ
ຢູ່ທົ່ງພຽງ ໂມອາບ ແຄມແມ່ນ້ຳ ຢໍແດນ ໃກ້ເມືອງ ເຢຣີໂກ [64]ແຕ່ຕາມລາຍຊື່ເຫລົ່ານີ້ບໍ່ມີຊາຍຈັກ
ຄົນໜຶ່ງຊຶ່ງ ໂມເຊ ແລະ ອາໂຣນ ປະໂລຫິດໄດ້ນັບ ໄວ້ຕອນທີ່ນັບຄົນ ອິສຣາເອນ ໃນຖິ່ນ ແຫ້ງແລ້ງ
ກັນດານ ຊີນາຍ [65]ເພາະ ພຣະຜູ້ເປັນເຈົ້າ ກ່າວເລື່ອງພວກເຂົາເຫລົ່ານັ້ນວ່າ "ພວກເຂົາຈະຕ້ອງ
ຕາຍໃນຖິ່ນແຫ້ງແລ້ງກັນດານ" ບໍ່ມີຊາຍຈັກຄົນໜຶ່ງ ເຫລືອຢູ່ນອກຈາກ ກາເລັບ ລູກຊາຍ ເຢຟຸນ-
ເນ ແລະ ໂຢຊວຍ ລູກຊາຍ ນູນ

# ບົດທີ 27

[1]ຕອນນັ້ນ ລູກສາວທັງຫລາຍຂອງ ເຊໂລເຟຮາດ ຜູ້ເປັນບຸດຂອງ ເຮເຟ ຜູ້ເປັນບຸດຂອງ
ກີເລອາດ ຜູ້ທີ່ເປັນບຸດຂອງ ມາກີ, ລູກຊາຍຂອງ ມານາເຊ ຜູ້ຊຶ່ງສືບຕະກູນຂອງ ໂຢເຊັບ ໄດ້
ເຂົ້າມາໃກ້ ລູກສາວທັງຫລາຍຂອງພວກເຂົາຄື: ມາລາ, ໂນອາ, ໂຮກລາ, ມີລະກາ ແລະ ຕີ-
ຣະຊາ [2]ແລະພວກເຂົາທັງຫລາຍມາຢືນຢູ່ຕໍ່ໜ້າ ໂມເຊ ແລະຕໍ່ໜ້າ ເອເລອາຊາ ຜູ້ເປັນປະໂລ-
ຫິດ ແລະຕໍ່ໜ້າຕະກູນ ແລະຕໍ່ໜ້າຊຸມນຸມຊົນທີ່ຫໍເຕັນນັດພົບ ກ່າວວ່າ, [3]"ບິດາຂອງເຮົາຕາຍ
ເສຍໃນຖິ່ນແຫ້ງແລ້ງກັນດານ ໂດຍປາດສະຈາກການມີລູກຊາຍສືບແທນແນວ, ເພິ່ນບໍ່ໄດ້ຢູ່ໃນ

ທ່າມກາງພວກ ໂກຣາ ຜູ້ທີ່ກະບົດຕໍ່ສູ້ ພຣະຜູ້ເປັນເຈົ້າ ແຕ່ເພິ່ນເສຍຊີວິດເພາະບາບຂອງຕົນ
ແລະບໍ່ມີລູກຊາຍເລີຍ. 4ເຫດໃດຈຶ່ງລຶບຊື່ຂອງບິດາເຮົາອອກຈາກຕະກູນຂອງເພິ່ນ ເພາະເຫດທີ່
ເພິ່ນບໍ່ມີລູກຊາຍນັ້ນບໍ? ຂໍໃຫ້ເຮົາມີສິດໃນການເປັນຜູ້ມີກຳມະສິດຂອງທີ່ດິນໃນທ່າມກາງອ້າຍ
ເອື້ອຍນ້ອງຂອງເຮົາແດ່."

5ໂມເຊ ໄດ້ນຳເລື່ອງຂອງພວກເຂົາຂາບທູນ ພຣະເຈົ້າ. 6ແລະ ພຣະເຈົ້າ ຊົງກ່າວກັບ ເພິ່ນວ່າ,
7"ລູກສາວຂອງ ເຊໂລເຟຂາດ ເວົ້າຖືກຕ້ອງແລ້ວ ເຈົ້າຈົ່ງໃຫ້ກຳມະສິດທີ່ດິນໃນທ່າມກາງພີ່ນ້ອງ
ຂອງພວກເຂົາ ແລະໃຫ້ມໍລະດົກບິດາຂອງພວກເຂົາຕົກທອດມາເຖິງພວກເຂົາ. 8ເຈົ້າຈົ່ງກ່າວ
ແກ່ຄົນ ອິສຣາເອນ ວ່າ, "ຖ້າຜູ້ຊາຍຄົນໜຶ່ງຕາຍ ໂດຍທີ່ລາວບໍ່ມີລູກຊາຍ ກໍຈົ່ງໃຫ້ມໍລະດົກຂອງ
ລາວຕົກໄປເປັນຂອງລູກສາວຂອງລາວໄດ້. 9ແລະ ຖ້າລາວບໍ່ມີລູກສາວ ກໍຈົ່ງໃຫ້ມໍລະດົກສ່ວນ
ນັ້ນຕົກເປັນຂອງພີ່ນ້ອງຂອງລາວ. 10ແລະຖ້າລາວບໍ່ມີອ້າຍນ້ອງ ກໍຈົ່ງມອບໃຫ້ເປັນຂອງພີ່ນ້ອງ
ຂອງພໍ່ລາວ. 11ແລະຖ້າບິດາຂອງລາວກໍບໍ່ມີພີ່ນ້ອງ ກໍຈົ່ງໃຫ້ມໍລະດົກນັ້ນຕົກເປັນຂອງຍາດພີ່-
ນ້ອງທີ່ໃກ້ຊິດຕໍ່ໄປ ເປັນຜູ້ມີສິດໃນການສືບມໍລະດົກນັ້ນ. ອັນນີ້ເປັນຄຳສັ່ງ ເປັນກົດເກນສຳລັບ
ອິສຣາເອນ ທີ່ພຣະເຈົ້າຊົງສັ່ງໃຫ້ໄວ້ກັບ ໂມເຊ."

## ການເຮັດສຳມະໂນຄົວຄົນອິສຣາເອນເປັນເທື່ອທີ່ສອງ

12ພຣະຜູ້ເປັນເຈົ້າຊົງກ່າວກັບ ໂມເຊວ່າ, "ຈົ່ງເດີນທາງໄປພູ ອາບາຣິມ ເພື່ອໄປເບິ່ງແຜ່ນ-
ດິນທີ່ເຮົາຈະມອບໃຫ້ພວກອິສຣາເອນ. 13-14ເມື່ອເຈົ້າໄດ້ເຫັນແລ້ວ ເຈົ້າຈະຕາຍເໝືອນດັ່ງອາ-
ໂຣນອ້າຍຂອງເຈົ້າ ຍ້ອນວ່າ ແຕ່ກ່ອນເຈົ້າທັງສອງໄດ້ລະເມີດຄຳສັ່ງຂອງເຮົາຢູ່ໃນຖິ່ນແຫ້ງ-
ແລ້ງກັນດານຊິນ ຄືໃນຄາວຊຸມນຸມຊົນທຸກຄົນຮ້ອງທຸກຕໍ່ສູ້ເຮົາທີ່ ເມຣິບາ ເຈົ້າໄດ້ປະຕິເສດບໍ່
ຮັບຮູ້ອຳນາດອັນສັກສິດຂອງເຮົາຕໍ່ໜ້າພວກເຂົາ" (ເມຣິບາ ເປັນຊື່ບໍ່ນ້ຳທີ່ເມືອງ ກາເດັດ ໃນຖິ່ນ
ແຫ້ງແລ້ງກັນດານຊິນ).

15-16ແລ້ວ ໂມເຊກໍໄດ້ອ້ອນວອນ ພຣະຜູ້ເປັນເຈົ້າວ່າ "ໂອ ຂ້າແດ່ພຣະຜູ້ເປັນເຈົ້າ ພຣະເຈົ້າ
ຜູ້ຊົງເປັນບໍ່ເກີດແຫ່ງຊີວິດຂອງທຸກຄົນ ພຣະອົງຊົງເປັນຜູ້ແຕ່ງຕັ້ງ ຂ້ານ້ອຍອ້ອນວອນຂໍຕໍ່ພຣະ-
ອົງ ຂໍຊົງໂຜດແຕ່ງຕັ້ງໃຫ້ມີຜູ້ນຳປະຊາຊົນເຫລົ່ານີ້. 17ແລະທັງເປັນຜູ້ບັງຄັບບັນຊາພວກເຂົາ
ອອກສູ່ສະໜາມຮົບ ເພື່ອວ່າຊຸມນຸມຊົນຂອງພຣະອົງນີ້ ຈະບໍ່ເປັນເໝືອນແກະທີ່ຂາດຜູ້ລ້ຽງ."

18ພຣະຜູ້ເປັນເຈົ້າຈຶ່ງກ່າວຕໍ່ ໂມເຊວ່າ, "ຈົ່ງໄປເອົາໂຢຊວຍລູກຊາຍຂອງທ່ານ ນູນ ຊຶ່ງເປັນ
ຜູ້ທີ່ມີຄວາມສາມາດ ແລະມີພຣະວິນຍານ ແລ້ວໃຫ້ວາງມືເທິງຫົວເພິ່ນ. 19ໃຫ້ເອົາລາວຢືນຢູ່ຕໍ່-
ໜ້າປະໂລຫິດ ເອເລອາຊາ ແລະຊຸມນຸມຊົນທັງໝົດ ແລ້ວໃຫ້ເຈົ້າປະກາດແຕ່ງຕັ້ງໃຫ້ລາວເປັນຜູ້
ສືບແທນເຈົ້າຕໍ່ໜ້າຄົນເຫລົ່ານີ້. 20ເພື່ອວ່າ ໃຫ້ຊຸມນຸມຊົນ ອິສຣາເອນຟັງຄວາມເພິ່ນ ຂໍໃຫ້ມອບ
ສິດ ແລະອຳນາດບາງຢ່າງຂອງເຈົ້າໃຫ້ໂຢຊວຍ 21ໂຢຊວຍຈະປຶກສາກັບປະໂລຫິດ ເອເລອາ-
ຊາ ຜູ້ທີ່ຮູ້ຈັກນ້ຳພຣະໄທຂອງເຮົາ ໂດຍອູຣິມ ແລະ ທູມມິມ ໂດຍວິທີນີ້ເອເລອາຊາຈະແນະນຳ
ໂຢຊວຍ ແລະຊຸມນຸມຊົນ ອິສຣາເອນທັງໝົດຕາມໜ້າທີ່ຂອງພວກເຂົາ."

22ແລ້ວ ໂມເຊໄດ້ປະຕິບັດຕາມຄຳສັ່ງຂອງ ພຣະຜູ້ເປັນເຈົ້າ ເພິ່ນໄດ້ໃຫ້ໂຢຊວຍຢືນຂຶ້ນຢູ່ຕໍ່-
ໜ້າປະໂລຫິດ. 23ເອເລອາຊາ ແລະຊຸມນຸມຊົນທັງໝົດວາງມືເທິງຫົວຂອງ ໂຢຊວຍ ແລະປະ-

ກາດແຕ່ງຕັ້ງໃຫ້ເປັນຜູ້ສືບແທນຕົນ.

# ບົດທີ 28

## ໂຢຊວຍເປັນຜູ້ຮັບໜ້າທີ່ແທນໂມເຊ

[1]ພຣະຜູ້ເປັນເຈົ້າ ກ່າວກັບ ໂມເຊ ວ່າ [2]“ຈົ່ງບອກຄົນ ອິສຣາເອນ ແລະກ່າວ ແກ່ພວກເຂົາວ່າ
ເຄື່ອງບູຊາຂອງເຮົາ ອາຫານຂອງເຮົາ ຊຶ່ງເປັນເຄື່ອງບູຊາດ້ວຍໄຟ ໃຫ້ເປັນກິ່ນທີ່ພໍພຣະໄທ
ພວກເຈົ້າຈົ່ງ ເອົາໃຈໃສ່ທີ່ຈະຖວາຍບູຊາແກ່ເຮົາຕາມເວລາກຳນົດ [3]ແລະເຈົ້າຈົ່ງກ່າວ ແກ່ພວກ
ເຂົາວ່າ ນີ້ເປັນເຄື່ອງບູຊາດ້ວຍໄຟຊຶ່ງພວກເຈົ້າຄວນຖວາຍແກ່ພຣະຜູ້ເປັນເຈົ້າ ຄືລູກແກະອາຍຸ
ໜຶ່ງປີບໍ່ມີຕຳໜິສອງໂຕ ເປັນເຄື່ອງບູຊາປະຈຳທຸກວັນ [4]ເຈົ້າຈົ່ງຖວາຍລູກແກະເປັນເຄື່ອງບູຊາ
ໃນຕອນເຊົ້າໂຕໜຶ່ງ ແລະລູກແກະອີກໂຕໜຶ່ງນັ້ນເຈົ້າ ຈົ່ງຖວາຍບູຊາໃນຕອນຄ່ຳ [5]ແລະຍອດ
ແປ້ງໜຶ່ງໃນສິບເອຟາເປັນເຄື່ອງບູຊາພືດຜົນເປັນເມັດນວດກັບນ້ຳມັນສະກັດໜຶ່ງໃນສີ່ຮິນ [6]ເປັນ
ເຄື່ອງເຜົາບູຊາປະຈຳ ຊຶ່ງໄດ້ບັນຊາຕັ້ງໄວ້ທີ່ພູເຂົາຊີນາຍ ໃຫ້ເປັນກິ່ນທີ່ພໍພຣະໄທ ເປັນເຄື່ອງບູ-
ຊາດ້ວຍໄຟຖວາຍແກ່ພຣະຜູ້ເປັນເຈົ້າ

[7]ສ່ວນເຄື່ອງດື່ມບູຊາຄູ່ກັນນັ້ນໃຫ້ຖວາຍໜຶ່ງໃນສີ່ຮິນກັບແກະໂຕໜຶ່ງ ໃນທີ່ບໍລິສຸດ ເຈົ້າຈົ່ງ
ຖອກເຄື່ອງດື່ມບູຊາຊຶ່ງເປັນເຫລົ້າອະງຸ່ນຖວາຍ ແກ່ພຣະຜູ້ເປັນເຈົ້າ [8]ລູກແກະອີກໂຕໜຶ່ງ ເຈົ້າ
ຈົ່ງຖວາຍບູຊາໃນຕອນຄ່ຳ ເຈົ້າຈົ່ງຖວາຍບູຊາດ້ວຍໄຟເຊັ່ນດຽວກັນກັບເຄື່ອງບູຊາພືດຜົນເປັນ
ເມັດຂອງຕອນເຊົ້າ ແລະເຄື່ອງດື່ມບູຊາພ້ອມ ໃຫ້ເປັນກິ່ນຫອມທີ່ພໍພຣະໄທພຣະຜູ້ເປັນເຈົ້າ

[9]ໃນວັນສະບາໂຕ ລູກແກະອາຍຸໜຶ່ງປີສອງຕົວທີ່ບໍ່ມີຕຳໜິ ແລະຍອດແປ້ງສອງໃນສິບເອຟາ
ນວດກັບນ້ຳມັນໃຫ້ເປັນເຄື່ອງບູຊາພືດຜົນເປັນເມັດ ແລະເຄື່ອງດື່ມບູຊາ [10]ນີ້ເປັນເຄື່ອງເຜົາບູຊາ
ທຸກວັນສະບາໂຕນອກເໜືອເຄື່ອງເຜົາບູຊາປະຈຳ ແລະເຄື່ອງດື່ມບູຊາ

[11]ເວລາຕົ້ນເດືອນທຸກເດືອນ ພວກເຈົ້າຈົ່ງຖວາຍເຄື່ອງເຜົາບູຊາແກ່ພຣະຜູ້ເປັນເຈົ້າ ຄືງົວ
ໜຸ່ມສອງໂຕ ແກະຜູ້ໂຕໜຶ່ງ ລູກແກະໜຶ່ງປີບໍ່ມີຕຳໜິເຈັດໂຕ [12]ສຳລັບງົວໂຕໜຶ່ງຈົ່ງເອົາຍອດ
ແປ້ງສາມໃນສິບເອຟານວດກັບນ້ຳມັນສຳລັບເປັນເຄື່ອງບູຊາພືດຜົນເປັນເມັດ ແລະສຳລັບແກະຜູ້
ໂຕໜຶ່ງນັ້ນຈົ່ງເອົາຍອດແປ້ງສອງໃນສິບເອຟານວດກັບນ້ຳມັນເປັນເຄື່ອງບູຊາພືດຜົນເປັນເມັດ
[13]ສຳລັບລູກແກະທຸກໂຕ ຈົ່ງເອົາຍອດແປ້ງໜຶ່ງໃນສິບເອຟານວດກັບນ້ຳມັນເປັນເຄື່ອງບູຊາພືດ
ຜົນເປັນເມັດ ໃຫ້ເປັນເຄື່ອງເຜົາບູຊາທີ່ມີກິ່ນຫອມທີ່ພໍພຣະໄທ ເປັນເຄື່ອງບູຊາດ້ວຍໄຟຖວາຍ
ແກ່ພຣະຜູ້ເປັນເຈົ້າ [14]ສ່ວນເຄື່ອງດື່ມບູຊາຄູ່ກັນນັ້ນ ສຳລັບງົວເຖິກໂຕໜຶ່ງຈົ່ງເອົານ້ຳອະງຸ່ນເຄິ່ງ
ຮິນ ສຳລັບແກະຜູ້ໂຕໜຶ່ງຈົ່ງເອົາໜຶ່ງໃນສາມຮິນ ສຳລັບລູກແກະໂຕໜຶ່ງຈົ່ງເອົາໜຶ່ງໃນສີ່ຮິນ ນີ້
ເປັນເຄື່ອງເຜົາບູຊາປະຈຳເດືອນ ທຸກເດືອນຕະຫລອດປີ [15]ແລະເອົາລູກແບ້ຜູ້ໂຕໜຶ່ງເປັນເຄື່ອງ
ບູຊາໄຖ່ບາບຖວາຍແກ່ພຣະຜູ້ເປັນເຈົ້າ ໃຫ້ນຳມາບູຊານອກເໜືອເຄື່ອງເຜົາບູຊາປະຈຳ ແລະ
ເຄື່ອງດື່ມບູຊາພ້ອມ

[16]ເດືອນທີໜຶ່ງວັນທີສິບສີ່ເປັນ ປັດສະຄາ ຂອງ ພຣະຜູ້ເປັນເຈົ້າ [17]ແລະວັນທີສິບຫ້າຂອງ
ເດືອນນີ້ເປັນມື້ແຫ່ງການກິນລ້ຽງ ຈົ່ງກິນເຂົ້າຈີ່ບໍ່ມີເຊື້ອແປ້ງເຈັດມື້ [18]ໃນມື້ທຳອິດໃຫ້ມີການປະ-

ຊຸມບໍລິສຸດ ພວກເຈົ້າຢ່າເຮັດວຽກໜັກໃນມື້ນັ້ນ
19ແຕ່ຈົ່ງຖວາຍບູຊາດ້ວຍໄຟ ເປັນເຄື່ອງເຜົາບູຊາແກ່ພຣະຜູ້ເປັນເຈົ້າ ຄືເອົາງົວໜຸ່ມສອງໂຕ
ແກະຜູ້ໂຕໜຶ່ງ ແລະລູກແກະອາຍຸໜຶ່ງປີເຈັດໂຕ ເບິ່ງໃຫ້ດີວ່າບໍ່ມີຕຳໜິ 20ແລະເອົາຍອດແປ້ງ
ນວດນ້ຳມັນເປັນເຄື່ອງບູຊາພືດຜົນເປັນເມັດຂອງສັດເຫລົ່ານັ້ນ ສຳລັບງົວເຖິກໂຕໜຶ່ງເຈົ້າຈົ່ງ
ຖວາຍສາມໃນສິບເອຟາ ແລະສຳລັບແກະຜູ້ໂຕໜຶ່ງສອງໃນສິບເອຟາ 21ສຳລັບລູກແກະໂຕໜຶ່ງ
ໃນລູກແກະເຈັດໂຕນັ້ນ ຈົ່ງເອົາແປ້ງໜຶ່ງໃນສິບເອຟາ 22ແລະເອົາແບ້ຜູ້ໂຕໜຶ່ງເປັນເຄື່ອງບູຊາ
ໄຖ່ບາບ ເພື່ອເຮັດການລຶບລ້າງມົນທິນບາບຂອງເຈົ້າ 23ເຈົ້າຈົ່ງຖວາຍເຄື່ອງບູຊາເຫລົ່ານີ້ ນອກ
ເໜືອເຄື່ອງເຜົາບູຊາຕອນເຊົ້າ ຊຶ່ງເປັນເຄື່ອງບູຊາປະຈຳນັ້ນ 24ໃນທຳນອງດຽວກັນ ເຈົ້າຈົ່ງ
ຖວາຍເຄື່ອງບູຊາທຸກວັນຕະຫລອດທັງເຈັດມື້ ຄືຖວາຍອາຫານເປັນເຄື່ອງບູຊາດ້ວຍໄຟ ເປັນກິ່ນ
ຫອມທີ່ພໍພຣະໄທພຣະຜູ້ເປັນເຈົ້າ ຈົ່ງຖວາຍບູຊານອກເໜືອເຄື່ອງເຜົາບູຊາປະຈຳ ແລະເຄື່ອງ
ດື່ມບູຊາດ້ວຍ 25ແລະໃນມື້ທີເຈັດ ພວກເຈົ້າຈົ່ງມີການປະຊຸມບໍລິສຸດ ເຈົ້າຢ່າເຮັດວຽກໜັກໃນມື້
ນັ້ນ

26ໃນວັນຖວາຍຜົນລຸ້ນທຳອິດ ເມື່ອເຈົ້າເອົາເຂົ້າໃໝ່ມາເປັນເຄື່ອງບູຊາພືດຜົນເປັນເມັດຖວາຍ
ແກ່ພຣະຜູ້ເປັນເຈົ້າໃນເທດສະການລະດູເກັບກ່ຽວນັ້ນ ເຈົ້າຈົ່ງມີການປະຊຸມບໍລິສຸດ ເຈົ້າຢ່າເຮັດ
ວຽກໜັກໃນມື້ນັ້ນ 27ແຕ່ຈົ່ງຖວາຍເຄື່ອງເຜົາບູຊາໃຫ້ເປັນກິ່ນຫອມທີ່ພໍພຣະໄທແກ່ພຣະຜູ້ເປັນ-
ເຈົ້າ ຄືຖວາຍງົວໜຸ່ມສອງໂຕ ແກະຜູ້ໂຕໜຶ່ງ ລູກແກະອາຍຸໜຶ່ງປີເຈັດໂຕ 28ແລະຖວາຍຍອດ
ແປ້ງນວດກັບນ້ຳມັນເປັນເຄື່ອງບູຊາພືດຜົນເປັນເມັດ ຄືສຳລັບງົວໂຕໜຶ່ງຖວາຍແປ້ງສາມໃນສິບ
ເອຟາ ສຳລັບແກະຜູ້ໜຶ່ງໂຕນັ້ນແມ່ນສອງໃນສິບເອຟາ 29ສຳລັບລູກແກະເຈັດໂຕ ໂຕລະໜຶ່ງໃນ
ສິບເອຟາ 30ພ້ອມກັບລູກແບ້ຜູ້ໂຕໜຶ່ງສຳລັບລຶບລ້າງມົນທິນຂອງເຈົ້າ 31ນອກຈາກເຄື່ອງເຜົາບູ-
ຊາປະຈຳ ແລະເຄື່ອງບູຊາພືດຜົນເປັນເມັດ ເຈົ້າຈົ່ງຖວາຍເຄື່ອງບູຊາເຫລົ່ານີ້ແລະເຄື່ອງດື່ມບູ-
ຊາດ້ວຍ (ເບິ່ງໃຫ້ດີວ່າຕ້ອງປາດສະຈາກຕຳໜິ)”

# ບົດທີ 29

## ຄຳສັ່ງສອນເລື່ອງເຄື່ອງບູຊາຕ່າງໆ

1“ໃນວັນທີໜຶ່ງເດືອນທີເຈັດ ເຈົ້າຈົ່ງມີການປະຊຸມບໍລິສຸດ ເຈົ້າຢ່າເຮັດວຽກໜັກ ເປັນວັນໃຫ້
ພວກເຈົ້າເປົ່າແກ 2ເຈົ້າຈົ່ງຖວາຍເຄື່ອງເຜົາບູຊາ ເປັນກິ່ນຫອມທີ່ພໍພຣະໄທພຣະຜູ້ເປັນເຈົ້າ ຄື
ຖວາຍງົວໜຸ່ມໂຕໜຶ່ງ ແກະຜູ້ໂຕໜຶ່ງ ລູກແກະອາຍຸໜຶ່ງປີບໍ່ມີຕຳໜິເຈັດໂຕ

3ແລະຖວາຍຍອດແປ້ງນວດນ້ຳມັນເປັນເຄື່ອງບູຊາພືດຜົນເປັນເມັດ ຄືສຳລັບງົວເຖິກນັ້ນ ຈົ່ງ
ຖວາຍແປ້ງສາມໃນສິບເອຟາ ສຳລັບແກະຜູ້ໂຕນັ້ນແມ່ນສອງໃນສິບເອຟາ 4ລູກແກະເຈັດໂຕ
ໂຕລະໜຶ່ງໃນສິບເອຟາ 5ແລະຖວາຍລູກແບ້ຜູ້ໂຕໜຶ່ງເປັນເຄື່ອງບູຊາໄຖ່ບາບ ເພື່ອລຶບລ້າງມົນ-
ທິນບາບຂອງເຈົ້າ 6ນອກເໜືອເຄື່ອງເຜົາບູຊາປະຈຳ ແລະເຄື່ອງບູຊາພືດຜົນເປັນເມັດ ແລະ
ເຄື່ອງເຜົາບູຊາປະຈຳຄູ່ກັບເຄື່ອງບູຊາພືດຜົນເປັນເມັດ ແລະເຄື່ອງດື່ມບູຊາພ້ອມ ຕາມກົດລະ-
ບຽບເຄື່ອງບູຊາເຫລົ່ານີ້ ໃຫ້ເປັນກິ່ນຫອມທີ່ພໍພຣະໄທ ເປັນເຄື່ອງບູຊາດ້ວຍໄຟຖວາຍແກ່ພຣະ-

ຜູ້ເປັນເຈົ້າ
7ໃນວັນທີສິບເດືອນທີເຈັດນີ້ ພວກເຈົ້າຈົ່ງມີການປະຊຸມບໍລິສຸດ ເຈົ້າຕ້ອງຖ່ອມໃຈລົງ ຢ່າເຮັດ
ວຽກໜັກໃດໆ 8ແຕ່ເຈົ້າຈົ່ງຖວາຍເຄື່ອງເຜົາບູຊາແກ່ພຣະຜູ້ເປັນເຈົ້າ ໃຫ້ເປັນກິ່ນຫອມທີ່ພໍ-
ພຣະໄທ ຄືຖວາຍງົວໜຸ່ມໂຕໜຶ່ງ ແກະຜູ້ໂຕໜຶ່ງ ລູກແກະອາຍຸໜຶ່ງປີເຈັດໂຕ ເຈົ້າຢ່າໃຫ້ມີຕຳໜິ
9ແລະຍອດແປ້ງປະສົມກັບນໍ້າມັນເປັນເຄື່ອງບູຊາພືດຜົນເປັນເມັດ ສຳລັບງົວໂຕນັ້ນຖວາຍແປ້ງ
ສາມໃນສິບເອຟາ ສຳລັບແກະຜູ້ໂຕໜຶ່ງນັ້ນແມ່ນສອງໃນສິບເອຟາ 10ສຳລັບລູກແກະເຈັດໂຕນັ້ນ
ໂຕລະໜຶ່ງໃນສິບເອຟາ 11ແລະຖວາຍລູກແບ້ຜູ້ໂຕໜຶ່ງເປັນເຄື່ອງບູຊາໄຖ່ບາບ ນອກເໜືອເຄື່ອງ
ບູຊາໄຖ່ບາບລຶບລ້າງມົນທິນ ແລະເຄື່ອງເຜົາບູຊາປະຈຳຊຶ່ງຄູ່ກັບເຄື່ອງບູຊາພືດຜົນເປັນເມັດ
ແລະເຄື່ອງດື່ມບູຊາພ້ອມ

12ໃນວັນທີສິບຫ້າເດືອນທີເຈັດ ພວກເຈົ້າຈົ່ງມີການປະຊຸມບໍລິສຸດ ເຈົ້າຢ່າເຮັດວຽກໜັກ ແລະ
ເຈົ້າຈົ່ງມີການກິນລ້ຽງເຈັດມື້ແກ່ພຣະຜູ້ເປັນເຈົ້າ 13ເຈົ້າຈົ່ງຖວາຍເຄື່ອງເຜົາບູຊາ ເຄື່ອງບູຊາ
ດ້ວຍໄຟ ເປັນກິ່ນຫອມທີ່ພໍພຣະໄທພຣະຜູ້ເປັນເຈົ້າ ຄືງົວໜຸ່ມສິບສາມໂຕ ແກະຜູ້ສອງໂຕ ລູກ
ແກະອາຍຸໜຶ່ງປີສິບສີ່ໂຕ ສັດເຫລົ່ານີ້ຢ່າໃຫ້ມີຕຳໜິ 14ແລະຖວາຍຍອດແປ້ງນວດນໍ້າມັນເປັນ
ເຄື່ອງບູຊາພືດຜົນເປັນເມັດ ສຳລັບງົວສິບສາມໂຕ ໂຕໜຶ່ງຖວາຍແປ້ງສາມໃນສິບເອຟາ ສຳລັບ
ແກະຜູ້ສອງໂຕ ໂຕລະສອງໃນສິບເອຟາ 15ສຳລັບລູກແກະສິບສີ່ໂຕ ໂຕລະໜຶ່ງໃນສິບເອຟາ
16ແລະຖວາຍລູກແບ້ຜູ້ໂຕໜຶ່ງເປັນເຄື່ອງບູຊາໄຖ່ບາບ ນອກເໜືອເຄື່ອງເຜົາບູຊາປະຈຳ ຊຶ່ງຄູ່
ກັບເຄື່ອງບູຊາພືດຜົນເປັນເມັດ ແລະເຄື່ອງດື່ມບູຊາພ້ອມ

17ໃນມື້ທີສອງ ຈົ່ງຖວາຍງົວໜຸ່ມສິບສອງໂຕ ແກະຜູ້ສອງໂຕ ລູກແກະອາຍຸໜຶ່ງປີບໍ່ມີຕຳໜິ
ສິບສີ່ໂຕ 18ກັບເຄື່ອງບູຊາພືດຜົນເປັນເມັດ ແລະເຄື່ອງດື່ມບູຊາຄູ່ກັນສຳລັບງົວ ແກະຜູ້ ແລະ
ລູກແກະນັ້ນຕາມຈຳນວນຕາມກົດໝາຍ 19ແລະຖວາຍລູກແບ້ຜູ້ໂຕໜຶ່ງເປັນເຄື່ອງບູຊາໄຖ່ບາບ
ນອກເໜືອເຄື່ອງເຜົາບູຊາປະຈຳ ຊຶ່ງຄູ່ກັບເຄື່ອງບູຊາພືດຜົນເປັນເມັດ ແລະເຄື່ອງດື່ມບູຊາປະ-
ຈຳ

20ໃນມື້ທີສາມ ຈົ່ງຖວາຍງົວສິບເອັດໂຕ ແກະຜູ້ສອງໂຕ ລູກແກະອາຍຸໜຶ່ງປີບໍ່ມີຕຳໜິສິບສີ່
ໂຕ 21ກັບເຄື່ອງບູຊາພືດຜົນເປັນເມັດ ແລະເຄື່ອງດື່ມບູຊາຄູ່ກັນ ສຳລັບງົວ ແກະຜູ້ ແລະລູກ
ແກະ ຕາມຈຳນວນ ຕາມກົດໝາຍ 22ແລະຖວາຍແບ້ຜູ້ໂຕໜຶ່ງເປັນເຄື່ອງບູຊາໄຖ່ບາບ ນອກ
ເໜືອເຄື່ອງເຜົາບູຊາປະຈຳ ຊຶ່ງຄູ່ກັນກັບເຄື່ອງບູຊາພືດຜົນເປັນເມັດ ແລະເຄື່ອງດື່ມບູຊາດ້ວຍ

23ໃນມື້ທີສີ່ຈົ່ງຖວາຍງົວສິບໂຕ ແກະຜູ້ສອງໂຕ ລູກແກະອາຍຸໜຶ່ງປີບໍ່ມີຕຳໜິສິບສີ່ໂຕ 24ກັບ
ເຄື່ອງບູຊາພືດຜົນເປັນເມັດ ແລະເຄື່ອງດື່ມບູຊາຄູ່ກັນ ສຳລັບງົວ ແກະຜູ້ ແລະລູກແກະ ຕາມ
ຈຳນວນ ຕາມກົດໝາຍ 25ແລະຖວາຍລູກແບ້ຜູ້ໂຕໜຶ່ງເປັນເຄື່ອງບູຊາໄຖ່ບາບ ນອກເໜືອ
ເຄື່ອງເຜົາບູຊາປະຈຳ ຊຶ່ງຄູ່ກັບເຄື່ອງບູຊາພືດຜົນເປັນເມັດ ແລະເຄື່ອງດື່ມບູຊາດ້ວຍ.

26ໃນມື້ທີຫ້າ ຈົ່ງຖວາຍງົວເກົ້າໂຕ ແກະຜູ້ສອງໂຕ ລູກແກະອາຍຸໜຶ່ງປີບໍ່ມີຕຳໜິສິບສີ່ໂຕ
27ກັບເຄື່ອງບູຊາພືດຜົນເປັນເມັດ ແລະເຄື່ອງດື່ມບູຊາຄູ່ກັນ ສຳລັບງົວ ແກະຜູ້ ແລະລູກແກະ
ຕາມຈຳນວນ ຕາມກົດໝາຍ 28ແລະຖວາຍແບ້ຜູ້ໂຕໜຶ່ງເປັນເຄື່ອງບູຊາໄຖ່ບາບ ນອກເໜືອ

ເຄື່ອງເຜົາບູຊາປະຈຳ ຊຶ່ງຄູ່ກັນກັບເຄື່ອງບູຊາພືດຜົນເປັນເມັດ ແລະເຄື່ອງດື່ມບູຊາພ້ອມ.
[29]ໃນມື້ທີຫົກ ຈົ່ງຖວາຍງົວແປດໂຕ ແກະຜູ້ສອງໂຕ ລູກແກະອາຍຸໜຶ່ງປີບໍ່ມີຕຳໜິສິບສີ່ໂຕ
[30]ກັບເຄື່ອງບູຊາພືດຜົນເປັນເມັດ ແລະເຄື່ອງດື່ມບູຊາຄູ່ກັນ ສຳລັບງົວ ແກະຜູ້ ແລະລູກແກະ
ຕາມຈຳນວນ ຕາມກົດໝາຍ [31]ແລະຖວາຍແບ້ຜູ້ໂຕໜຶ່ງເປັນເຄື່ອງບູຊາໄຖ່ບາບ ນອກເໜືອ
ເຄື່ອງເຜົາບູຊາປະຈຳ ຊຶ່ງຄູ່ກັບເຄື່ອງບູຊາພືດຜົນເປັນເມັດ ແລະເຄື່ອງດື່ມບູຊາພ້ອມ
[32]ໃນມື້ທີເຈັດ ເຈົ້າຈົ່ງຖວາຍງົວເຈັດໂຕ ແກະຜູ້ສອງໂຕ ລູກແກະອາຍຸໜຶ່ງປີບໍ່ມີຕຳໜິສິບສີ່
ໂຕ [33]ກັບເຄື່ອງບູຊາພືດຜົນເປັນເມັດ ແລະເຄື່ອງດື່ມບູຊາຄູ່ກັນ ສຳລັບງົວ ແກະຜູ້ ແລະລູກ
ແກະ ຕາມຈຳນວນ ຕາມກົດໝາຍ [34]ແລະຖວາຍແບ້ຜູ້ໂຕໜຶ່ງເປັນເຄື່ອງບູຊາໄຖ່ບາບ ນອກ
ເໜືອເຄື່ອງເຜົາບູຊາປະຈຳ ຊຶ່ງຄູ່ກັບເຄື່ອງບູຊາພືດຜົນເປັນເມັດ ແລະເຄື່ອງດື່ມບູຊາພ້ອມ
[35]ໃນມື້ທີແປດ ເຈົ້າຈົ່ງມີການປະຊຸມອັນສັກສິດ ເຈົ້າຢ່າເຮັດວຽກໜັກ [36]ແຕ່ເຈົ້າຈົ່ງຖວາຍ
ເຄື່ອງເຜົາບູຊາ ເຄື່ອງບູຊາດ້ວຍໄຟ ໃຫ້ເປັນກິ່ນຫອມທີ່ພໍພຣະໄທພຣະຜູ້ເປັນເຈົ້າ ຄືງົວເຖິກ
ໂຕໜຶ່ງ ແກະຜູ້ໂຕໜຶ່ງ ລູກແກະອາຍຸໜຶ່ງປີບໍ່ມີຕຳໜິເຈັດໂຕ [37]ແລະຖວາຍເຄື່ອງບູຊາພືດຜົນ
ເປັນເມັດ ແລະເຄື່ອງດື່ມບູຊາຄູ່ກັນ ສຳລັບງົວ ແກະຜູ້ ແລະລູກແກະ ຕາມຈຳນວນ ຕາມກົດ-
ໝາຍ [38]ແລະຖວາຍແບ້ຜູ້ໂຕໜຶ່ງເປັນເຄື່ອງບູຊາໄຖ່ບາບ ນອກເໜືອເຄື່ອງເຜົາບູຊາປະຈຳ ຊຶ່ງ
ຄູ່ກັນກັບເຄື່ອງບູຊາພືດຜົນເປັນເມັດ ແລະເຄື່ອງດື່ມບູຊາດ້ວຍ.
[39]ສິ່ງເຫລົ່ານີ້ພວກເຈົ້າຈົ່ງຖວາຍແກ່ພຣະຜູ້ເປັນເຈົ້າຕາມເທດສະການກຳນົດຂອງເຈົ້າ ເພີ່ມ
ເຂົ້າກັບການຖວາຍຕາມຄຳປະຕິຍານຂອງເຈົ້າ ແລະການຖວາຍດ້ວຍໃຈສະໝັກຂອງເຈົ້າ ເປັນ
ເຄື່ອງເຜົາບູຊາ ເຄື່ອງບູຊາພືດຜົນເປັນເມັດ ເຄື່ອງດື່ມບູຊາ ແລະເຄື່ອງບູຊາເພື່ອຄວາມສາມັກ-
ຄີທຳຂອງເຈົ້າ” [40]ແລະໂມເຊໄດ້ບອກຄົນອິສຣາເອນຕາມທີ່ພຣະຜູ້ເປັນເຈົ້າໄດ້ຊົງບັນຊາເພິ່ນ
ໄວ້ທຸກປະການ

# ບົດທີ 30

## ເທດສະການເປົ່າແກ ແລະການປະຊຸມບໍລິສຸດ

[1]ໂມເຊໄດ້ເວົ້າກັບຫົວໜ້າຕະກູນກ່ຽວກັບຄົນອິສຣາເອນວ່າ “ນີ້ເປັນສິ່ງທີ່ພຣະຜູ້ເປັນເຈົ້າໄດ້
ຊົງສັ່ງໄວ້ [2]ເມື່ອຊາຍຜູ້ໃດປະຕິຍານໄວ້ກັບພຣະຜູ້ເປັນເຈົ້າ ຫລືໃຫ້ປະຕິຍານຜູກມັດຕົວໄວ້
ດ້ວຍຄຳສັນຍາ[ກ] ຢ່າງໜຶ່ງຢ່າງໃດ ຢ່າໃຫ້ລາວເສຍສັດຈະ ລາວຕ້ອງເຮັດຕາມຄຳທີ່ອອກຈາກ
ປາກຂອງລາວທັງໝົດ
[3]ຫລືເມື່ອຍິງຄົນໜຶ່ງຄົນໃດປະຕິຍານໄວ້ແກ່ພຣະຜູ້ເປັນເຈົ້າ ແລະຜູກມັດຕົວເອງໄວ້ດ້ວຍຄຳ
ສັນຍາ ເມື່ອນາງຍັງສາວຢູ່ໃນເຮືອນຂອງພໍ່ [4]ແລະພໍ່ຂອງນາງໄດ້ຍິນຄຳທີ່ນາງປະຕິຍານໄວ້
ແລະຄຳສັນຍາທີ່ນາງຜູກມັດຕົວເອງ ແຕ່ບໍ່ໄດ້ເວົ້າຫຍັງກັບນາງ ກໍໃຫ້ຄຳທີ່ປະຕິຍານໄວ້ນັ້ນຄົງ
ຢູ່ ແລະໃຫ້ຄຳສັນຍາທີ່ຜູກມັດນາງໄວ້ນັ້ນຄົງຢູ່ [5]ແຕ່ຖ້າພໍ່ຂອງນາງຄັດຄ້ານໃນມື້ທີ່ລາວໄດ້ຍິນ
ນັ້ນ ການທີ່ນາງປະຕິຍານໄວ້ກໍດີ ຄຳສັນຍາທີ່ຜູກມັດນາງໄວ້ກໍດີ ຈະໝົດໄປນຳ ແລະພຣະຜູ້-

[ກ]ຄຳສັນຍາດ້ວຍຈິດໃຈໝັ້ນຄົງ

ເປັນເຈົ້າຈະຊົງອະໄພໃຫ້ແກ່ນາງ ເພາະພໍ່ຂອງນາງໄດ້ຄັດຄ້ານນາງໄວ້

6ແລະຖ້ານາງແຕ່ງງານມີຜົວແລ້ວ ສິ່ງທີ່ນາງປະຕິຍານໄວ້ ຫລືກ່າວດ້ວຍຮີມປາກທີ່ບໍ່ທັນຄິດ
ຊຶ່ງຜູກມັດນາງ 7ຝ່າຍຜົວກໍໄດ້ຍິນແລ້ວ ແລະໃນມື້ທີ່ໄດ້ຍິນ ລາວກໍບໍ່ໄດ້ເວົ້າຫຍັງກັບນາງ ສິ່ງທີ່
ນາງປະຕິຍານໄວ້ນັ້ນ ແລະຄໍາສັນຍາທີ່ຜູກມັດນາງຈະຍັງຢູ່ 8ແຕ່ຖ້າໃນມື້ນັ້ນຄືຜົວມາໄດ້ຍິນ
ນາງ ແລະລາວຄັດຄ້ານ ກໍໃຫ້ຄໍາທີ່ນາງປະຕິຍານໄວ້ນັ້ນເປັນໂມຄະ ທັງຄໍາກ່າວດ້ວຍຮີມປາກ
ທີ່ບໍ່ທັນຄິດຂອງນາງ ຊຶ່ງຜູກມັດນາງນັ້ນກໍເປັນໂມຄະດ້ວຍ ແລະພຣະຜູ້ເປັນເຈົ້າຈະອະໄພໃຫ້
ແກ່ນາງ

9ແຕ່ຄໍາປະຕິຍານທີ່ແມ່ໝ້າຍ ຫລືແມ່ຮ້າງໃຫ້ໄວ້ ຫລືຄໍາໃດທີ່ນາງເວົ້າຜູກມັດຕົນເອງ ຄໍາ
ເວົ້ານັ້ນຈະຍັງຢູ່ 10ແລະຖ້ານາງປະຕິຍານໄວ້ໃນເຮືອນຂອງຜົວນາງ ຫລືໃຫ້ສັນຍາດ້ວຍຜູກມັດ
ຕົນເອງໄວ້ 11ແລະຜົວຂອງນາງໄດ້ຍິນແລ້ວ ແຕ່ບໍ່ເວົ້າຫຍັງແກ່ນາງ ແລະບໍ່ຄັດຄ້ານນາງ ຄໍາ
ປະຕິຍານຂອງນາງທັງໝົດຈະຍັງຢູ່ ແລະຄໍາສັນຍາທຸກຢ່າງຊຶ່ງນາງຜູກມັດຕົວເອງຈະຍັງຢູ່ເຊັ່ນ
ກັນ. 12ແຕ່ຖ້າຜົວຂອງນາງໄດ້ເຮັດໃຫ້ເປັນໂມຄະໃນມື້ທີ່ລາວໄດ້ຍິນແລ້ວ ສິ່ງໃດທີ່ອອກຈາກ
ຮີມປາກຂອງນາງກ່ຽວດ້ວຍຄໍາປະຕິຍານ ຫລືຄໍາສັນຍາຂອງນາງກໍຈະເປັນໂມຄະ ຜົວຂອງນາງ
ໄດ້ເຮັດໃຫ້ເປັນໂມຄະ ແລະພຣະຜູ້ເປັນເຈົ້າຈະຊົງອະໄພໃຫ້ແກ່ນາງ

13ຄໍາປະຕິຍານທັງໝົດທີ່ເຮັດໃຫ້ນາງຖ່ອມໃຈເອງ ຜົວຂອງນາງສາມາດເຮັດໃຫ້ຄົງຢູ່ ຫລື
ເປັນໂມຄະໄດ້ 14ແຕ່ຖ້າຜົວຂອງນາງບໍ່ກ່າວສິ່ງໃດແກ່ນາງ ລາວຍ່ອມເຮັດໃຫ້ຄໍາປະຕິຍານ
ແລະຄໍາສັນຍາທັງໝົດຂອງນາງ ຊຶ່ງຈະຕົກແກ່ນາງໃຫ້ຍັງຢູ່ ເພາະລາວບໍ່ເວົ້າສິ່ງໃດໃນມື້ທີ່ລາວ
ໄດ້ຍິນ ລາວຈຶ່ງເຮັດໃຫ້ຄົງຢູ່ 15ແຕ່ຖ້າພາຍຫລັງທີ່ລາວໄດ້ຍິນ ແລ້ວມາເຮັດໃຫ້ເປັນໂມຄະ
ລາວຕ້ອງຮັບໂທດຕາມຄວາມຊົ່ວຊ້າຂອງນາງ”

16ຂໍ້ຄວາມເຫລົ່ານີ້ເປັນກົດເກນຊຶ່ງພຣະຜູ້ເປັນເຈົ້າຊົງສັ່ງໂມເຊໄວ້ເປັນເລື່ອງລະຫວ່າງຜົວ
ກັບເມຍຂອງລາວ ເລື່ອງລະຫວ່າງພໍ່ກັບລູກສາວ ໃນຂະນະທີ່ນາງຍັງເປັນສາວຢູ່ ຄືຍັງຢູ່ໃນ
ເຮືອນພໍ່ຂອງນາງ

# ບົດທີ 31

## ບັນຍັດເລື່ອງການປະຕິຍານໄວ້ກັບພຣະເຈົ້າ

1ພຣະຜູ້ເປັນເຈົ້າກ່າວກັບໂມເຊວ່າ 2“ຈົ່ງແກ້ແຄ້ນຄົນມີດີອານເພື່ອຄົນອິສຣາເອນ ແລ້ວ
ພາຍຫລັງເຈົ້າຈະຕາຍໄປຢູ່ກັບປະຊາຊົນຂອງເຈົ້າ”

3ແລະໂມເຊກ່າວກັບປະຊາຊົນວ່າ “ຈົ່ງຕຽມຄົນບາງຄົນໃນພວກເຈົ້າໃຫ້ພ້ອມດ້ວຍອາວຸດ
ເພື່ອເຮັດສົງຄາມ ແລ້ວຍົກໄປສູ້ພວກມີດີອານເພື່ອການແກ້ແຄ້ນຂອງພຣະຜູ້ເປັນເຈົ້າຕໍ່ຄົນມີ-
ດີອານ 4ເຈົ້າຈົ່ງສົ່ງຄົນຈາກຕະກູນອິສຣາເອນທັງໝົດ ຕະກູນລະພັນຄົນເຂົ້າຮ່ວມສົງຄາມ”
5ດັ່ງນັ້ນ ພວກເຂົາຈຶ່ງຈັດຄົນຈາກອິສຣາເອນທີ່ນັບພັນໆ ຕະກູນລະພັນຄົນ ເປັນຄົນໝື່ນສອງ
ພັນພ້ອມດ້ວຍອາວຸດເພື່ອເຂົ້າສົງຄາມ

6ແລະໂມເຊສົ່ງຄົນຕະກູນລະພັນຄົນອອກໄປເຮັດສົງຄາມ ທັງຄົນເຫລົ່ານັ້ນກັບຟີເນຮາດລູກ

ຊາຍ ເອເລອາຊາ ໄປເຮັດສົງຄາມ ພ້ອມກັບເຄື່ອງໃຊ້ອັນບໍລິສຸດ ແລະມີແກປຸກຢູ່ໃນມື 7ພວກ
ເຂົາເຮັດສົງຄາມຕໍ່ສູ້ຄົນ ມີດີອານ ຕາມທີ່ ພຣະຜູ້ເປັນເຈົ້າ ຊົງສັ່ງ ໂມເຊ ແລະໄດ້ຂ້າຜູ້ຊາຍທຸກຄົນ
8ພວກເຂົາໄດ້ປະຫານຊີວິດບັນດາກະສັດຄົນ ມີດີອານ ພ້ອມກັບຄົນອື່ນທີ່ພວກເຂົາຂ້າ ມີ ເອວີ,
ເຣເກັມ ຊູເຣ, ຮູເຣ, ແລະ ເຣບາ ກະສັດທັງຫ້າອົງຂອງຄົນ ມີດີອານ ແລະໄດ້ປະຫານຊີວິດ
ບາລາອາມ ລູກຊາຍ ເບໂອ ດ້ວຍດາບ

9ແລະຄົນ ອິສຣາເອນ ໄດ້ຈັບຜູ້ຍິງຊາວ ມີດີອານ ທັງໝົດມາເປັນຊະເລີຍ ພ້ອມກັບພວກເດັກ-
ນ້ອຍທັງຫລາຍ ແລະກວາດເອົາຝູງງົວຝູງແບ້ແກະແລະເຄື່ອງຂອງທັງປວງໄປໝົດ ຊຶ່ງເປັນຊັບ
ທີ່ປຸ້ນມາໄດ້ 10ແລະເອົາໄຟເຜົາບັນດາເມືອງທີ່ອາໄສຂອງພວກເຂົາ ແລະເຜົາຄ້າຍທັງໝົດຂອງ
ພວກເຂົາດ້ວຍ 11ແລ້ວເກັບບັນດາເຄື່ອງທີ່ຍຶດໄດ້ ແລະຊັບທີ່ປຸ້ນມາໄດ້ທັງຄົນ ແລະສັດໄປໝົດ
12ແລ້ວພວກເຂົານຳຊະເລີຍ ແລະຊັບສິນທີ່ປຸ້ນໄດ້ກັບເຄື່ອງທີ່ຍຶດໄດ້ທັງໝົດມາຫາ ໂມເຊ ແລະ
ເອເລອາຊາ ແລະຊຸມນຸມຊົນ ອິສຣາເອນ ທີ່ຄ້າຍ ໃນທົ່ງພຽງ ໂມອາບ ແຄມແມ່ນ້ຳຢໍແດນ ໃກ້
ເມືອງ ເຢຣີໂກ 13ໂມເຊ ແລະ ເອເລອາຊາ ປະໂລຫິດ ແລະບັນດາຫົວໜ້າແຫ່ງຊຸມນຸມຊົນອອກ
ໄປຕ້ອນຮັບພວກເຂົານອກຄ້າຍ

14ໂມເຊ ຮ້າຍພວກນາຍທະຫານ ຄືນາຍພັນ ແລະນາຍຮ້ອຍຜູ້ກັບຈາກການ ເຮັດສົງຄາມ
15ໂມເຊ ເວົ້າກັບພວກເຂົາວ່າ “ເຈົ້າທັງຫລາຍໄດ້ໄວ້ຊີວິດພວກຜູ້ຍິງທັງໝົດຫລື 16ເບິ່ງແມ ຍ້ອນ
ຄຳປຶກສາຂອງ ບາລາອາມ ຍິງ ເຫລົ່ານີ້ຈຶ່ງ ໄດ້ ເຮັດ ໃຫ້ຄົນ ອິສຣາເອນ ຫລົງລະເມີດຕໍ່ ພຣະຜູ້-
ເປັນເຈົ້າ ໃນເລື່ອງ ເປໂອ ແລະໄພພິບັດຈຶ່ງໄດ້ເກີດຂຶ້ນທ່າມກາງຊຸມນຸມຊົນຂອງ ພຣະຜູ້ເປັນເຈົ້າ
17ບັດນີ້ ຈົ່ງປະຫານຊີວິດເດັກນ້ອຍຜູ້ຊາຍທຸກຄົນ ແລະປະຫານຊີວິດຜູ້ຍິງທີ່ເຄີຍນອນຮ່ວມກັບ
ຊາຍທຸກຄົນ 18ແຕ່ຈົ່ງໄວ້ຊີວິດເດັກນ້ອຍຜູ້ຍິງທີ່ຍັງບໍ່ເຄີຍນອນຮ່ວມກັບຊາຍໄວ້ສຳລັບເຈົ້າທັງ-
ຫລາຍເອງ

19ຈົ່ງຢູ່ພາຍນອກຄ້າຍເຈັດມື້ ຜູ້ໃດທີ່ໄດ້ຂ້າຄົນ ແລະຜູ້ໃດທີ່ໄດ້ແຕະຕ້ອງຜູ້ທີ່ຖືກຂ້າ ຈົ່ງຊຳ-
ລະຕົວ ແລະຊະເລີຍຂອງຕົນເອງໃນມື້ທີສາມ ແລະມື້ທີເຈັດ 20ເຈົ້າຕ້ອງຊຳລະເຄື່ອງແຕ່ງກາຍ
ທຸກສ່ວນ ເຄື່ອງໜັງສັດທຸກສ່ວນ ແລະເຄື່ອງຂົນແບ້ທັງໝົດ ແລະເຄື່ອງທີ່ເຮັດດ້ວຍໄມ້ທຸກ
ສ່ວນ”

21ແລະ ເອເລອາຊາ ປະໂລຫິດໄດ້ກ່າວແກ່ທະຫານຜູ້ອອກໄປເຮັດສົງຄາມວ່າ “ນີ້ເປັນກົດ
ບັນຍັດຊຶ່ງ ພຣະຜູ້ເປັນເຈົ້າ ໄດ້ສັ່ງ ໂມເຊ ໄວ້ 22ສະເພາະທອງຄຳ ເງິນ ທອງສຳລິດ ເຫລັກ ດີ
ບຸກ ແລະຊືນ 23ທຸກສິ່ງທີ່ທົນໄຟໄດ້ ພວກເຈົ້າຈົ່ງລວກດ້ວຍໄຟ ແລ້ວຈະສະອາດ ຢ່າງໃດກໍດີ
ຕ້ອງຊຳລະດ້ວຍນ້ຳລ້າງມົນທິນ ແລະສິ່ງໃດທີ່ທົນໄຟບໍ່ໄດ້ເຈົ້າຕ້ອງໃຫ້ຜ່ານນ້ຳ 24ເຈົ້າຕ້ອງຊັກ
ເສື້ອຜ້າຂອງເຈົ້າໃນມື້ທີເຈັດ ແລະເຈົ້າຈະສະອາດ ຫລັງຈາກນັ້ນ ເຈົ້າຈຶ່ງຈະເຂົ້າມາໃນຄ້າຍໄດ້”

25ພຣະຜູ້ເປັນເຈົ້າ ກ່າວກັບ ໂມເຊ ວ່າ 26“ເຈົ້າ ແລະ ເອເລອາຊາ ກັບບັນດາຫົວໜ້າຂອງຊຸມ-
ນຸມຊົນ ຈົ່ງນັບສິ່ງຂອງທີ່ໄດ້ມາທັງຄົນ ແລະສັດ 27ແລະແບ່ງສິ່ງຂອງເຫລົ່ານັ້ນອອກເປັນສອງ
ສ່ວນ ໃຫ້ທະຫານຜູ້ອອກໄປເຮັດສົງຄາມສ່ວນຫນຶ່ງ ແລະໃຫ້ບັນດາຊຸມນຸມຊົນອີກສ່ວນໜຶ່ງ

28ແລະຈົ່ງຫັກເອົາສ່ວນໜຶ່ງຈາກທະຫານທີ່ອອກໄປເຮັດສົງຄາມເປັນຂອງຖວາຍແກ່ພຣະຜູ້-

ເປັນເຈົ້າ ຫ້າຮ້ອຍຫັກໜຶ່ງ ທັງຄົນ ແລະງົວ ແລະລໍ ແລະຝູງແບ້ ແກະ 29ຈຶ່ງເອົາຈາກເຄິ່ງ
ສ່ວນຂອງພວກເຂົາ ມອບໃຫ້ແກ່ເອເລອາຊາ ເປັນເຄື່ອງບູຊາແກ່ພຣະຜູ້ເປັນເຈົ້າ 30ແລະຈາກ
ເຄິ່ງສ່ວນຂອງຄົນອິສຣາເອນນັ້ນ ເຈົ້າຈົ່ງນຳຫ້າສິບຫັກໜຶ່ງຈາກຄົນ ຝູງງົວ ຝູງລໍ ແລະຝູງແບ້
ແກະ ແລະສັດທັງໝົດ ມອບໃຫ້ແກ່ຄົນເລວີຜູ້ເບິ່ງແຍງຫໍເຕັນສັກສິດຂອງພຣະຜູ້ເປັນເຈົ້າ"

31ແລະ ໂມເຊ ກັບ ເອເລອາຊາ ປະໂລຫິດ ໄດ້ເຮັດຕາມທີ່ພຣະຜູ້ເປັນເຈົ້າຊົງສັ່ງແກ່ໂມເຊ
32ບັນດາຊັບທີ່ປຸ້ນມາໄດ້ ອັນເຫລືອຈາກສິ່ງທີ່ທະຫານຍຶດມານັ້ນ ຄື ແກະຫົກແສນເຈັດໝື່ນຫ້າ
ພັນໂຕ 33ງົວເຈັດໝື່ນສອງພັນໂຕ 34ລໍຫົກໝື່ນໜຶ່ງພັນໂຕ 35ແລະຄົນ ຄືຜູ້ຍິງທີ່ຍັງບໍ່ເຄີຍນອນ
ຮ່ວມກັບຊາຍ ທັງໝົດມີສາມໝື່ນສອງພັນຄົນ

36ແລະໃນເຄິ່ງສ່ວນຂອງຄົນທີ່ອອກໄປເຮັດສົງຄາມ ມີແກະສາມແສນສາມໝື່ນເຈັດພັນຫ້າ
ຮ້ອຍໂຕ 37ສ່ວນແກະທີ່ເປັນຂອງພຣະຜູ້ເປັນເຈົ້າມີຫົກຮ້ອຍເຈັດສິບຫ້າໂຕ 38ມີງົວສາມໝື່ນຫົກ
ພັນໂຕ ງົວທີ່ເປັນສ່ວນຂອງພຣະຜູ້ເປັນເຈົ້າເຈັດສິບສອງໂຕ 39ມີລໍສາມໝື່ນຫ້າຮ້ອຍໂຕ ຊຶ່ງ
ເປັນສ່ວນຂອງພຣະຜູ້ເປັນເຈົ້າຫົກສິບເອັດໂຕ 40ສ່ວນຄົນມີໜຶ່ງໝື່ນຫົກພັນຄົນ ຊຶ່ງເປັນສ່ວນ
ຂອງພຣະຜູ້ເປັນເຈົ້າສາມສິບສອງຄົນ

41ໂມເຊໄດ້ມອບສ່ວນທີ່ໄດ້ມາຊຶ່ງເປັນຂອງພິເສດຖວາຍແກ່ພຣະຜູ້ເປັນເຈົ້ານັ້ນມອບໃຫ້ແກ່
ເອເລອາຊາຕາມທີ່ພຣະຜູ້ເປັນເຈົ້າຊົງສັ່ງໄວ້ກັບໂມເຊ

42ຈາກເຄິ່ງສ່ວນຂອງຄົນອິສຣາເອນ ຊຶ່ງ ໂມເຊໄດ້ແບ່ງມາຈາກສ່ວນທີ່ທະຫານໄປເຮັດສົງ-
ຄາມໄດ້ນັ້ນ 43(ເຄິ່ງສ່ວນຂອງຊຸມນຸມຊົນ ຄື ແກະສາມແສນສາມໝື່ນເຈັດພັນຫ້າຮ້ອຍໂຕ 44ງົວ
ສາມໝື່ນຫົກພັນໂຕ 45ລໍສາມໝື່ນຫ້າຮ້ອຍໂຕ 46ແລະຄົນໜຶ່ງໝື່ນຫົກພັນຄົນ)

47ຈາກເຄິ່ງສ່ວນຂອງຄົນອິສຣາເອນນັ້ນ ໂມເຊໄດ້ເອົາໜຶ່ງສ່ວນຫ້າສິບ ທັງຄົນ ແລະສັດ
ມອບໃຫ້ແກ່ຄົນເລວີຜູ້ເບິ່ງແຍງຫໍເຕັນສັກສິດຂອງພຣະຜູ້ເປັນເຈົ້າ ດັ່ງທີ່ພຣະຜູ້ເປັນເຈົ້າຊົງສັ່ງ
ໂມເຊໄວ້

48ແລ້ວນາຍທະຫານຜູ້ບັງຄັບກອງພັນທັງປວງ ຄືນາຍພັນນາຍຮ້ອຍໄດ້ເຂົ້າມາໃກ້ໂມເຊ
49ແລະກ່າວແກ່ໂມເຊວ່າ "ຄົນໃຊ້ຂອງທ່ານໄດ້ກວດນັບທະຫານຜູ້ຢູ່ໃຕ້ບັງຄັບບັນຊາຂອງຂ້າ-
ນ້ອຍແລ້ວບໍ່ມີຄົນຫາຍໄປຈັກຄົນດຽວ 50ແລະຂ້ານ້ອຍໄດ້ນຳສ່ວນທີ່ຖວາຍແກ່ພຣະຜູ້ເປັນເຈົ້າ
ຊຶ່ງຕ່າງຄົນຕ່າງໄດ້ມາ ຄື ສິ່ງທີ່ເຮັດດ້ວຍທອງຄຳ ມີປອກຂາ ແລະສາຍຄໍ ແຫວນ ຕຸ້ມຫູ
ແລະປອກແຂນ ເພື່ອເຮັດການລຶບລ້າງມົນທິນບາບຂອງພວກເຮົາທັງຫລາຍຕໍ່ພຣະພັກພຣະຜູ້-
ເປັນເຈົ້າ" 51ໂມເຊ ແລະ ເອເລອາຊາກໍຮັບເອົາບັນດາສິ່ງຂອງທີ່ເຮັດດ້ວຍທອງຄຳຈາກພວກເຂົາ
52ແລະທອງຄຳທັງໝົດຈາກເຄື່ອງຖວາຍ ຊຶ່ງພວກເຂົາໄດ້ຖວາຍແກ່ພຣະຜູ້ເປັນເຈົ້າ ຈາກນາຍ
ພັນ ແລະນາຍຮ້ອຍ ມີນ້ຳໜັກໜຶ່ງໝື່ນຫົກພັນເຈັດຮ້ອຍຫ້າສິບເຊເຂ 53(ທະຫານເຫລົ່ານັ້ນຕ່າງ
ຄົນຕ່າງກໍໄດ້ເກັບເຄື່ອງຂອງຂອງຂ້າເສິກມານຳ) 54ໂມເຊ ແລະ ເອເລອາຊາ ໄດ້ຮັບທອງຄຳ
ຈາກນາຍພັນນາຍຮ້ອຍ ນຳມາໃນຫໍເຕັນສັກສິດແຫ່ງຊຸມນຸມ ເປັນທີ່ລະນຶກແກ່ຄົນອິສຣາເອນຕໍ່
ພຣະພັກພຣະຜູ້ເປັນເຈົ້າ

# ບົດທີ 32

## ການແກ້ແຄ້ນຄົນມີດີອານ

[1]ຄົນ ຣູເບັນ ແລະຄົນ ຄາດ ມີຝູງງົວເປັນຈຳນວນຫລາຍ ພວກເຂົາໄດ້ເຫັນແຜ່ນດິນຢາເຊ ແລະ
ແຜ່ນດິນ ກິເລອາດ ບ່ອນນັ້ນເປັນບ່ອນທີ່ເໝາະແກ່ຝູງສັດ [2]ດັ່ງນັ້ນ ຄົນ ຄາດ ແລະຄົນ ຣູເບັນ
ຈຶ່ງມາຫາ ໂມເຊ ແລະ ເອເລອາຊາ ແລະຫົວໜ້າຂອງຊຸມນຸມຊົນກ່າວວ່າ [3]"ອາຕາໂຣດ ດີໂບນ
ຢາເຊ ນິມຣາ ເຮັດຊະໂບນ ເອເລອາເລ ເສບາມ ເນໂບ ແລະ ເບໂອນ [4]ເປັນແຜ່ນດິນຊຶ່ງ
ພຣະຜູ້ເປັນເຈົ້າ ຊົງທຳລາຍຕໍ່ໜ້າຄົນ ອິສຣາເອນ ເປັນແຜ່ນດິນເໝາະກັບຝູງສັດ ແລະຂ້ານ້ອຍ
ຄົນໃຊ້ຂອງທ່ານມີຝູງງົວ" [5]ແລະພວກເຂົາທັງຫລາຍກ່າວວ່າ "ຖ້າຂ້ານ້ອຍທັງຫຼາຍເປັນທີ່ມັກໃນ
ສາຍຕາຂອງທ່ານ ຂໍມອບແຜ່ນດິນນີ້ເປັນກຳມະສິດແກ່ຄົນໃຊ້ຂອງທ່ານ ຂໍຢ່າພາຂ້ານ້ອຍທັງ-
ຫຼາຍຂ້າມແມ່ນ້ຳຢໍແດນ ໄປເລີຍ"

[6]ແຕ່ ໂມເຊ ເວົ້າກັບຄົນ ຄາດ ແລະຄົນ ຣູເບັນ ວ່າ "ຄວນໃຫ້ພີ່ນ້ອງຂອງ ເຈົ້າໄປ ເຮັດສົງຄາມ
ແຕ່ຝ່າຍພວກເຈົ້າຈະຄອຍຢູ່ບ່ອນນີ້ແບບນັ້ນບໍ? [7]ເປັນຫຍັງເຈົ້າທັງຫລາຍເຮັດໃຫ້ຈິດໃຈຂອງຄົນ
ອິສຣາເອນ ທໍ້ຖອຍທີ່ຈະຍົກຂ້າມໄປຍັງ ແຜ່ນດິນຊຶ່ງ ພຣະຜູ້ເປັນເຈົ້າ ໄດ້ຊົງປະທານ ແກ່ພວກເຂົາ
[8]ພໍ່ຂອງ ເຈົ້າທັງຫລາຍໄດ້ເຮັດເຊັ່ນນີ້ ຕອນທີ່ເຮົາໄດ້ໃຊ້ພວກເຂົາໄປຈາກ ກາເດັດ-ບາເນອາ ໃຫ້
ສອດແນມເບິ່ງ ແຜ່ນດິນນັ້ນ [9]ເມື່ອພວກເຂົາຂຶ້ນໄປຍັງພູເຂົາ ເອັດຊະໂຄນ ແລະ ໄດ້ເຫັນ ແຜ່ນດິນ
ນັ້ນແລ້ວ ພວກເຂົາກໍເຮັດໃຫ້ຈິດໃຈຄົນ ອິສຣາເອນ ທໍ້ຖອຍທີ່ຈະຍົກເຂົ້າໄປໃນແຜ່ນດິນຊຶ່ງ ພຣະ-
ຜູ້ເປັນເຈົ້າ ໄດ້ຊົງປະທານແກ່ພວກເຂົາ [10]ໃນມື້ນັ້ນ ພຣະຜູ້ເປັນເຈົ້າ ຊົງ ໂກດຮ້າຍພວກເຂົາຢ່າງ
ໜັກ ພຣະອົງຊົງປະຕິຍານໄວ້ວ່າ [11]'ແນ່ນອນທີ່ສຸດ ທຸກຄົນທີ່ໄດ້ອົບພະຍົບອອກຈາກ ເອຢິບ
ອາຍຸຕັ້ງແຕ່ຊາວປີຂຶ້ນໄປຈະບໍ່ໄດ້ເຫັນແຜ່ນດິນຊຶ່ງ ເຮົາໄດ້ສັນຍາວ່າຈະມອບໃຫ້ ອັບຣາຮາມ ອີ-
ຊາກ ແລະຢາໂຄບ ເພາະພວກເຂົາບໍ່ໄດ້ຕິດຕາມເຮົາດ້ວຍໃຈຈິງ [12]ເວັ້ນແຕ່ ກາເລັບ ລູກຊາຍ
ເຢຟຸນເນ ຄົນ ເກນິດຊີ ແລະ ໂຢຊວຍ ລູກຊາຍ ນູນ ເພາະວ່າພວກເຂົາທັງສອງຕິດຕາມ ພຣະຜູ້-
ເປັນເຈົ້າ ດ້ວຍ ໃຈຈິງ' [13]ແລະ ພຣະຜູ້ເປັນເຈົ້າ ຊົງ ໂກດຮ້າຍຕໍ່ ອິສຣາເອນ ພຣະອົງຈຶ່ງຊົງໃຫ້
ພວກເຂົາພະເນຈອນຢູ່ໃນຖິ່ນແຫ້ງແລ້ງກັນດານສີ່ສິບປີ ຈົນລຸ້ນພວກທີ່ເຮັດຜິດໃນສາຍພຣະເນດ
ຂອງ ພຣະຜູ້ເປັນເຈົ້າ ຕາຍໄປຈົນໝົດ [14]ແລະເບິ່ງແມ ເຈົ້າໄດ້ເຕີບໃຫຍ່ຂຶ້ນມາແທນພໍ່ຂອງເຈົ້າ
ເປັນ ເຊື້ອສາຍຄົນບາບທີ່ຈະ ເພີ່ມທະວີພຣະພິໂລດຂອງ ພຣະຜູ້ເປັນເຈົ້າ ຕໍ່ ອິສຣາເອນ ໃຫ້ຫລາຍ
ຍິ່ງຂຶ້ນ [15]ເພາະວ່າຖ້າ ເຈົ້າທັງຫລາຍຫັນໜີຈາກການຕິດຕາມພຣະອົງ ພຣະອົງຈະຊົງປະຖິ້ມ
ພວກເຈົ້າໃນຖິ່ນແຫ້ງແລ້ງກັນດານອີກ ແລະເຈົ້າທັງຫລາຍຈະທຳລາຍຊົນຊາດທັງໝົດນີ້"

[16]ແລ້ວພວກເຂົາ ເຂົ້າມາໃກ້ ໂມເຊ ກ່າວວ່າ "ຂ້ານ້ອຍທັງຫລາຍຈະສ້າງຄອກສຳລັບຝູງ ແບ້
ແກະບ່ອນນີ້ ແລະສ້າງ ເມືອງສຳລັບລູກນ້ອຍທັງຫລາຍ [17]ແຕ່ເຮົາທັງຫລາຍຈະຖືອາວຸດພ້ອມທີ່
ຈະໄປຂ້າງໜ້າຄົນ ອິສຣາເອນ ຈົນກວ່າເຮົາທັງຫລາຍຈະນຳພວກເຂົາໄປເຖິງບ່ອນຂອງພວກເຂົາ
ເດັກນ້ອຍຂອງ ເຮົາຈະ ໄດ້ຢູ່ໃນ ເມືອງທີ່ມີກຳແພງອ້ອມຮອບ ເພາະຢ້ານຊາວແຜ່ນດິນນີ້ [18]ເຮົາ
ທັງຫລາຍຈະບໍ່ຍອມກັບ ເຮືອນຈົນກວ່າຄົນ ອິສຣາເອນ ຈະ ໄດ້ຮັບມໍລະດົກຂອງພວກເຂົາທຸກຄົນ
[19]ເພາະ ເຮົາຈະບໍ່ໄດ້ຮັບມໍລະດົກກັບພວກເຂົາຊຶ່ງຢູ່ຟາກແມ່ນ້ຳຢໍແດນ ແລະຕໍ່ອອກໄປ ເພາະວ່າ

ມໍລະດົກທີ່ຕົກທອດມາເຖິງເຮົາກໍຢູ່ຟາກແມ່ນ້ຳຢໍແດນ ເບື້ອງຕາເວັນອອກນີ້"
20ໂມເຊ ຈຶ່ງກ່າວແກ່ພວກເຂົາວ່າ "ຖ້າເຈົ້າທັງຫລາຍຈະເຮັດເຊັ່ນນີ້ ຄືຈັບອາວຸດຂຶ້ນເຂົ້າສູ່ສົງ-
ຄາມຕໍ່ພຣະພັກ ພຣະຜູ້ເປັນເຈົ້າ 21ແລະຄົນຂອງເຈົ້າທີ່ຖືອາວຸດທຸກຄົນ ຈະຂ້າມແມ່ນ້ຳຢໍແດນ
ໄປຕໍ່ພຣະພັກ ພຣະຜູ້ເປັນເຈົ້າ ຈົນກວ່າພຣະອົງຈະຊົງຂັບໄລ່ສັດຕູໃຫ້ພົ້ນພຣະອົງ 22ແລະ
ແຜ່ນດິນນັ້ນຈະພ່າຍແພ້ຕໍ່ພຣະພັກ ພຣະຜູ້ເປັນເຈົ້າ ແລ້ວ ພາຍຫລັງເຈົ້າຈຶ່ງຈະກັບ ແລະພົ້ນ
ຈາກພັນທະທີ່ມີຕໍ່ ພຣະຜູ້ເປັນເຈົ້າ ແລະຊາວ ອິສຣາເອນ ແລະແຜ່ນດິນນີ້ຈະຕົກເປັນກຳມະສິດ
ຂອງເຈົ້າຕໍ່ພຣະພັກ ພຣະຜູ້ເປັນເຈົ້າ
23ແຕ່ຖ້າເຈົ້າທັງຫລາຍບໍ່ໄດ້ເຮັດເຊັ່ນນີ້ ເບິ່ງແມ ເຈົ້າທັງຫລາຍໄດ້ເຮັດບາບຕໍ່ ພຣະຜູ້ເປັນ-
ເຈົ້າ ຈົ່ງຮູ້ໄວ້ວ່າ ບາບຂອງທ່ານກໍຈະໄລ່ຕາມທັນ 24ຈົ່ງສ້າງເມືອງສຳລັບເດັກນ້ອຍທັງຫລາຍ
ຂອງເຈົ້າ ແລະສ້າງຄອກສຳລັບແບ້ແກະຂອງເຈົ້າ ແລະເຮັດຕາມຄຳທີ່ອອກຈາກປາກຂອງເຈົ້າ"
25ຄົນ ຄາດ ກັບຄົນ ຣູເບັນ ຈຶ່ງກ່າວແກ່ ໂມເຊ ວ່າ "ຄົນໃຊ້ຂອງທ່ານຈະເຮັດດັ່ງທີ່ເຈົ້ານາຍຂອງ
ຂ້ານ້ອຍບັນຊາ 26ເດັກນ້ອຍທັງຫລາຍ ເມຍທັງຫລາຍ ຝູງສັດ ແລະສັດໃຊ້ທັງໝົດຂອງພວກ
ເຮົາ ຈະຢູ່ບ່ອນນີ້ໃນເມືອງ ກິເລອາດ 27ແຕ່ຄົນໃຊ້ຂອງທ່ານທຸກຄົນຜູ້ມີອາວຸດເຮັດສົງຄາມຈະ
ຂ້າມໄປ ເພື່ອສູ້ຮົບຕໍ່ພຣະພັກ ພຣະຜູ້ເປັນເຈົ້າ ດັ່ງທີ່ເຈົ້ານາຍຂອງຂ້ານ້ອຍສັ່ງ"
28ກ່ຽວກັບເລື່ອງພວກເຂົານີ້ ໂມເຊ ຈຶ່ງອອກຄຳສັ່ງແກ່ ເອເລອາຊາ ແລະ ໂຢຊວຍ ລູກຊາຍ ນູນ
ແລະ ແກ່ຫົວໜ້າຕະກູນຂອງຄົນ ອິສຣາເອນ 29ແລະ ໂມເຊ ກ່າວແກ່ພວກເຂົາວ່າ "ຖ້າຄົນ ຄາດ
ແລະຄົນ ຣູເບັນ ທຸກຄົນຜູ້ມີອາວຸດທີ່ຈະເຮັດສົງຄາມຕໍ່ພຣະພັກ ພຣະຜູ້ເປັນເຈົ້າ ຈະຂ້າມແມ່ນ້ຳ
ຢໍແດນ ໄປພ້ອມກັບເຈົ້າທັງຫລາຍ ແລະແຜ່ນດິນນັ້ນຈະພ່າຍແພ້ຕໍ່ໜ້າເຈົ້າແລ້ວ ເຈົ້າຈົ່ງມອບ
ແຜ່ນດິນ ກິເລອາດ ໃຫ້ເປັນກຳມະສິດແກ່ພວກເຂົາ 30ແຕ່ຖ້າພວກເຂົາບໍ່ຖືອາວຸດຂ້າມໄປກັບເຈົ້າ
ພວກເຂົາຈະຕ້ອງໄດ້ສ່ວນແຜ່ນດິນ ການາອານ ຮ່ວມກັບເຈົ້າເປັນກຳມະສິດ" 31ຄົນ ຄາດ ກັບຄົນ
ຣູເບັນ ຕອບວ່າ "ພຣະຜູ້ເປັນເຈົ້າກ່າວກັບຄົນໃຊ້ຂອງທ່ານຢ່າງໃດ ພວກເຮົາທັງຫລາຍຈະເຮັດ
ຢ່າງນັ້ນ 32ພວກເຮົາຈະຖືອາວຸດຂ້າມໄປຕໍ່ພຣະພັກ ພຣະຜູ້ເປັນເຈົ້າ ສູ່ແຜ່ນດິນ ການາອານ
ແລະທີ່ດິນມໍລະດົກຂອງພວກເຮົານັ້ນຈະຄົງຢູ່ຟາກແມ່ນ້ຳຢໍແດນ ເບື້ອງນີ້"
33ໂມເຊ ໄດ້ມອບດິນແດນເຫລົ່ານີ້ແກ່ຄົນ ຄາດ ແລະຄົນ ຣູເບັນ ແລະເຄິ່ງໜຶ່ງຂອງຕະກູນ
ມານາເຊ ລູກຊາຍ ໂຢເຊັບ ຄືອານາຈັກຂອງ ສີໂຮນ ກະສັດແຫ່ງຄົນ ອະໂມຣິດ ແລະອານາຈັກ
ຂອງ ໂອກ ກະສັດແຫ່ງ ບາຊານ ທັງແຜ່ນດິນ ແລະຫົວເມືອງ ຕະຫລອດພົມແດນ ຄືຫົວເມືອງ
ໃຫຍ່ໃນແຜ່ນດິນນີ້ຕະຫລອດປະເທດ 34ແລະຄົນ ຄາດ ກໍສ້າງເມືອງ ດີໂບນ ອາຕາໂຣດ ອາໂຣ-
ເອ. 35ອາດໂຣດ-ໂຊຟັນ ຢາເຊ ໂຢກເບຮາ 36ເບັດ-ນິມຣາ ແລະ ເບັດ-ຮາຣານ ໃຫ້ເປັນ
ເມືອງມີກຳແພງອ້ອມຮອບ ແລະສ້າງຄອກໃຫ້ແກະ 37ຄົນ ຣູເບັນ ກໍສ້າງເມືອງ ເຮັດຊະໂບນ ເອ-
ເລອາເລ ກີຣິອາດທາຢິມ 38ເນໂບ ແລະ ບາອານ-ເມໂອນ (ຊື່ເຫລົ່ານີ້ຕ້ອງປ່ຽນໃໝ່) ແລະ
ສິບມາ ແລະຕັ້ງຊື່ໃໝ່ໃຫ້ແກ່ເມືອງທີ່ພວກເຂົາສ້າງຂຶ້ນນັ້ນ
39ຄົນ ມາກີ ບຸດຊາຍ ມານາເຊ ໄດ້ເຂົ້າໄປຍຶດເມືອງ ກິເລອາດ ແລະຂັບໄລ່ພວກ ອະໂມຣິດ ຊຶ່ງ
ຢູ່ໃນເມືອງນັ້ນ 40ໂມເຊ ຈຶ່ງຍົກ ກິເລອາດ ໃຫ້ແກ່ ມາກີ ບຸດຊາຍ ມານາເຊ ແລະພວກເຂົາກໍເຂົ້າອາ

ໃສ່ຢູ່ໃນເມືອງນັ້ນ 41ຢາອີ ບຸດຊາຍ ມານາເຊ ຍົກທັບໄປຍຶດຊົນນະບົດຂອງພວກເຂົາເຫລົ່ານັ້ນ
ແລະເອີ້ນຊື່ວ່າ ຮາໂວດ-ຢາອີ. 42ໂນບາ ໄປຍຶດ ເກນາດ ແລະຊົນນະບົດຂອງເມືອງນີ້ ແລະເອີ້ນ
ວ່າເມືອງ ໂນບາ ຕາມຊື່ຂອງພວກເຂົາ

# ບົດທີ 33

## ຕະກູນຣູເບັນ ຕະກູນຄາດແລະເຄິ່ງໜຶ່ງຂອງຕະກູນມານາເຊ ຈະໄດ້ຮັບແຜ່ນດິນດ້ານຕາເວັນອອກຂອງແມ່ນ້ຳຢໍແດນ

1ຕໍ່ໄປນີ້ແມ່ນໄລຍະທາງຍ່າງຂອງຄົນ ອິສຣາເອນ ເມື່ອເຂົາຍ່າງອອກຈາກແຜ່ນດິນ ເອຢິບ
ເປັນໝວດໝູ່ພາຍໃຕ້ການນຳຂອງ ໂມເຊ ແລະ ອາໂຣນ 2ໂມເຊ ໄດ້ຈົດສະຖານທີ່ທີ່ພວກເຂົາອອກ
ຍ່າງເທື່ອລະໄລຍະໆຕາມພຣະບັນຊາຂອງ ພຣະຜູ້ເປັນເຈົ້າ ຕໍ່ໄປນີ້ເປັນໄລຍະຕາມສະຖານທີ່ທີ່
ພວກເຂົາຍ່າງໄປ 3ເຂົາຍົກຍ່າງອອກຈາກ ຣາເມເສດ ໃນເດືອນຕົ້ນ ໃນວັນທີສິບຫ້າຂອງເດືອນ
ຕົ້ນນັ້ນ ຖັດຈາກວັນ ປັດສະຄາ ໄປມື້ໜຶ່ງ ຄົນ ອິສຣາເອນ ຍ່າງອອກຢ່າງມີໄຊໃນສາຍຕາຂອງ
ບັນດາຊາວ ເອຢິບ ທັງໝົດ 4ໃນຂະນະນັ້ນ ຊາວ ເອຢິບ ກຳລັງຝັງສົບລູກຫົວປີທັງຫລາຍຂອງຕົນ
ຜູ້ທີ່ ພຣະຜູ້ເປັນເຈົ້າ ຊົງປະຫານຊີວິດທ່າມກາງພວກ ເຂົາ ພຣະຜູ້ເປັນເຈົ້າ ຊົງລົງໂທດພະທັງ-
ຫລາຍຂອງເຂົາດ້ວຍ

5ດັ່ງນັ້ນ ຄົນ ອິສຣາເອນ ຈຶ່ງຍົກຍ່າງອອກຈາກ ຣາເມເສດ ແລະຕັ້ງຄ້າຍທີ່ ສຸກໂກດ

6ແລະພວກເຂົາຍົກຍ່າງອອກຈາກ ສຸກໂກດ ແລະມາຕັ້ງຄ້າຍທີ່ ເອທາມ ຊຶ່ງຢູ່ແຄມຖິ່ນ ແຫ້ງ-
ແລ້ງກັນດານ 7ພວກເຂົາຍົກຍ່າງອອກຈາກ ເອທາມ ຖອຍຫລັງກັບມາຢູ່ຕໍ່ໜ້າ ບາອານ-ເຊໂຟນ
ແລະພວກເຂົາໄດ້ຕັ້ງຄ້າຍຢູ່ໜ້າເມືອງ ມິກໂດນ

8ແລະພວກເຂົາຍົກຍ່າງອອກຈາກໜ້າ ຮາຮີໂຣດ ຂ້າມກາງທະເລເຂົ້າໄປໃນຖິ່ນແຫ້ງແລ້ງກັນ-
ດານ ແລະພວກເຂົາຍ່າງໄປໃນຖິ່ນແຫ້ງແລ້ງກັນດານ ເອທາມ ໄລຍະທາງສາມມື້ ແລະມາຕັ້ງ
ຄ້າຍທີ່ ມາຣາ

9ແລະພວກເຂົາຍົກຍ່າງອອກຈາກ ມາລາ ມາເຖິງ ເອລິມ ທີ່ ເອລິມ ມີນ້ຳພຸສິບສອງແຫ່ງ ແລະ
ຕົ້ນຕານເຈັດສິບຕົ້ນ ແລະພວກເຂົາຕັ້ງຄ້າຍບ່ອນນັ້ນ

10ພວກເຂົາຍົກຍ່າງອອກຈາກ ເອລິມ ມາຕັ້ງຄ້າຍທີ່ທະເລແດງ

11ແລະພວກເຂົາຍົກຍ່າງອອກຈາກທະເລແດງມາຕັ້ງຄ້າຍຢູ່ໃນຖິ່ນແຫ້ງແລ້ງກັນດານ ສິນ

12ພວກເຂົາຍົກຍ່າງອອກຈາກຖິ່ນແຫ້ງແລ້ງກັນດານ ສິນ ມາຕັ້ງຄ້າຍທີ່ ໂດບຟະກາ

13ແລະພວກເຂົາຍົກຍ່າງອອກຈາກ ໂດບຟະກາ ມາຕັ້ງຄ້າຍທີ່ ອາລູຊາ

14ແລະພວກເຂົາຍົກຍ່າງອອກຈາກ ອາລູຊາ ມາຕັ້ງຄ້າຍທີ່ ເຣຟີດິມ ບ່ອນນັ້ນບໍ່ມີນ້ຳໃຫ້ປະ-
ຊາຊົນດື່ມ

15ແລະພວກເຂົາຍົກຍ່າງອອກຈາກ ເຣຟີດິມ ມາຕັ້ງຄ້າຍໃນຖິ່ນແຫ້ງແລ້ງກັນດານຊີນາຍ

16ແລະພວກເຂົາຍົກຍ່າງອອກຈາກຖິ່ນແຫ້ງແລ້ງກັນດານ ຊີນາຍ ມາຕັ້ງຄ້າຍຢູ່ ກິບໂຣດ-ຮັດ-
ຕາວາ

17ພວກເຂົາອອກຍ່າງອອກຈາກ ກິບໂຣດ-ຮັດຕາວາ ມາຕັ້ງຄ້າຍທີ່ ຣາເຊໂຣດ
18ແລະພວກເຂົາຍົກຍ່າງອອກຈາກ ຣາເຊໂຣດ ມາຕັ້ງຄ້າຍທີ່ ຣິດມາ
19ພວກເຂົາຍົກຍ່າງອອກຈາກ ຣິດມາ ມາຕັ້ງຄ້າຍທີ່ ຣິມໂມນ-ເປເຣັດ
20ພວກເຂົາຍົກຍ່າງອອກຈາກ ຣິມໂມນ-ເປເຣັດ ມາຕັ້ງຄ້າຍທີ່ ລິບນາ
21ພວກເຂົາຍົກຍ່າງອອກຈາກ ລິບນາ ມາຕັ້ງຄ້າຍທີ່ ຣິດສາ
22ແລະພວກເຂົາຍົກຍ່າງອອກຈາກ ຣິດສາ ມາຕັ້ງຄ້າຍທີ່ ເກເຮລາທາ
23ພວກເຂົາຍົກຍ່າງອອກຈາກ ເກເຮລາທາ ມາຕັ້ງຄ້າຍທີ່ພູເຂົາ ເຊເຟ.
24ແລະພວກເຂົາຍົກຍ່າງອອກຈາກພູເຂົາ ເຊເຟ ມາຕັ້ງຄ້າຍທີ່ ຮາຣາດາ
25ພວກເຂົາຍົກຍ່າງອອກຈາກ ຮາຣາດາ ມາຕັ້ງຄ້າຍທີ່ ມັກເຮໂລດ
26ແລະພວກເຂົາຍົກຍ່າງອອກຈາກ ມັກເຮໂລດ ມາຕັ້ງຄ້າຍທີ່ ຕາຮາດ
27ພວກເຂົາຍົກຍ່າງອອກຈາກ ຕາຮາດ ມາຕັ້ງຄ້າຍທີ່ ເຕຣາ
28ແລະພວກເຂົາຍົກຍ່າງອອກຈາກ ເຕຣາ ມາຕັ້ງຄ້າຍທີ່ ມິທະກາ
29ພວກເຂົາຍົກຍ່າງອອກຈາກ ມິທະກາ ມາຕັ້ງຄ້າຍທີ່ ຮາຊະໂມນາ
30ແລະພວກເຂົາຍົກຍ່າງອອກຈາກ ຮາຊະໂມນາ ມາຕັ້ງຄ້າຍທີ່ ໂມເສໂຣດ
31ພວກເຂົາຍົກຍ່າງອອກຈາກ ໂມເສໂຣດ ມາຕັ້ງຄ້າຍທີ່ ເບເນ-ຢາອາການ
32ແລະພວກເຂົາຍົກຍ່າງອອກຈາກ ເບເນ-ຢາອາການ ມາຕັ້ງຄ້າຍທີ່ ໂຮເຣ-ຮັກກິດກາດ
33ພວກເຂົາຍົກຍ່າງອອກຈາກ ໂຮເຣ-ຮັກກິດກາດ ມາຕັ້ງຄ້າຍທີ່ ໂຢດບາທາ
34ແລະພວກເຂົາຍົກຍ່າງອອກຈາກ ໂຢດບາທາ ມາຕັ້ງຄ້າຍທີ່ ອາບໂຣນາ
35ພວກເຂົາຍົກຍ່າງອອກຈາກ ອາບໂຣນາ ມາຕັ້ງຄ້າຍທີ່ ເອັດຊີໂອນ-ເກເບ.
36ແລະພວກເຂົາຍົກຍ່າງອອກຈາກ ເອັດຊີໂອນ-ເກເບ ມາຕັ້ງຄ້າຍໃນຖິ່ນແຫ້ງແລ້ງກັນດານ
ຊິນ ຄື ກາເດັດ

37ພວກເຂົາຍົກຍ່າງອອກຈາກ ກາເດັດ ມາຕັ້ງຄ້າຍທີ່ພູເຂົາ ໂຮເຣ ຕິດກັບແຜ່ນດິນ ເອໂດມ
38ແລະປະໂລຫິດ ອາໂຣນ ໄດ້ຂຶ້ນໄປເທິງພູເຂົາ ໂຮເຣ ຕາມພຣະບັນຊາຂອງ ພຣະຜູ້ເປັນເຈົ້າ
ແລະໄດ້ເສຍຊີວິດຢູ່ບ່ອນນັ້ນ ໃນວັນທີໜຶ່ງເດືອນທີຫ້າປີທີ່ສີ່ສິບ ນັບຕັ້ງແຕ່ມື້ທີ່ຄົນ ອິສຣາເອນ
ຍົກຍ່າງອອກຈາກປະເທດ ເອຢິບ 39ເມື່ອ ອາໂຣນ ເສຍຊີວິດທີ່ພູເຂົາ ໂຮເຣ ນັ້ນ ເພິ່ນມີອາຍຸໜຶ່ງ
ຮ້ອຍຊາວສາມປີ 40ແລະກະສັດເມືອງ ອາຣັດ ຊາວ ການາອານ ຜູ້ທີ່ຢູ່ທາງພາກໃຕ້ໃນແຜ່ນດິນ
ການາອານ ໄດ້ຍິນຂ່າວວ່າຄົນ ອິສຣາເອນ ຍົກມາ

41ແລະພວກເຂົາຍົກຍ່າງອອກຈາກພູເຂົາ ໂຮເຣ ມາຕັ້ງຄ້າຍທີ່ ຊັນໂມນາ
42ພວກເຂົາຍົກຍ່າງອອກຈາກ ຊັນໂມນາ ມາຕັ້ງຄ້າຍທີ່ ປູໂນນ
43ແລະພວກເຂົາຍົກຍ່າງອອກຈາກ ປູໂນນ ມາຕັ້ງຄ້າຍທີ່ ໂອໂບດ
44ພວກເຂົາຍົກຍ່າງອອກຈາກ ໂອໂບດ ມາຕັ້ງຄ້າຍທີ່ ອີເຢ-ອາບາຣິມ ໃນດິນແດນ ໂມອາບ
45ແລະພວກເຂົາອອກຍ່າງອອກຈາກ ອີຢິມ ມາຕັ້ງຄ້າຍທີ່ ດີໂບນ-ກາດ
46ພວກເຂົາຍົກຍ່າງອອກຈາກ ດີໂບນ-ກາດ ແລະມາຕັ້ງຄ້າຍທີ່ ອັນໂມນ-ດິບລະທາຢິມ

47ແລະພວກເຂົາຍົກຍ້າຍອອກຈາກອັນໂມນ-ດິບລະທາຢິມ ມາຕັ້ງຄ້າຍໃນພູເຂົາເນໂບ
48ແລະພວກເຂົາຍົກຍ້າຍອອກຈາກພູເຂົາອາບາຣີມ ມາຕັ້ງຄ້າຍຢູ່ທົ່ງພຽງໂມອາບ ແຄມແມ່
ນ້ຳຢໍແດນໃກ້ເມືອງເຢຣີໂກ 49ພວກເຂົາຕັ້ງຄ້າຍຢູ່ແຄມແມ່ນ້ຳຢໍແດນຕັ້ງແຕ່ເບັດ-ເຢຊີໂມດ
ໄກ ໄປຈົນຮອດອາເບັນ-ຊິດຕີມ ໃນທົ່ງພຽງໂມອາບ
50ແລະພຣະຜູ້ເປັນເຈົ້າກ່າວກັບໂມເຊ ໃນທົ່ງພຽງໂມອາບ ແຄມແມ່ນ້ຳຢໍແດນໃກ້ເມືອງ
ເຢຣີໂກວ່າ 51"ຈົ່ງກ່າວແກ່ຄົນອິສຣາເອນວ່າ ເມື່ອເຈົ້າຂ້າມແມ່ນ້ຳຢໍແດນເຂົ້າໄປໃນແຜ່ນດິນ
ການາອານ 52ເຈົ້າຈົ່ງຂັບໄລ່ຊາວເມືອງນັ້ນອອກທັງໝົດໃຫ້ພົ້ນໜ້າເຈົ້າ ແລະທຳລາຍຮູບແກະ-
ສະຫລັກຂອງພວກເຂົາໃຫ້ໝົດ ແລະທຳລາຍຮູບເຄົາລົບທີ່ເປັນໂລຫະຂອງພວກເຂົາໃຫ້ໝົດ
ແລະທຳລາຍບັນດາປູຊະນີຍະສະຖານສູງຂອງພວກເຂົາ 53ແລະເຈົ້າຈົ່ງຂັບໄລ່ຊາວແຜ່ນດິນນັ້ນ
ອອກ ແລະເຂົ້າໄປຕັ້ງຄ້າຍຢູ່ໃນນັ້ນ ເພາະເຮົາໄດ້ໃຫ້ແຜ່ນດິນນັ້ນໃຫ້ເຈົ້າຖືກຳມະສິດ 54ພວກ
ເຈົ້າຈົ່ງຈັບສະຫລາກມໍລະດົກທີ່ດິນນັ້ນຕາມຄອບຄົວຂອງເຈົ້າ ຄອບຄົວທີ່ໃຫຍ່ເຈົ້າຈົ່ງ ໃຫ້ມໍລະ-
ດົກສ່ວນໃຫຍ່ ຄອບຄົວທີ່ນ້ອຍເຈົ້າຈົ່ງໃຫ້ມໍລະດົກສ່ວນນ້ອຍ ດິນຜືນໃດທີ່ສະຫລາກຕົກແກ່ຄົນ
ໃດກໍເປັນຂອງຄົນນັ້ນ ເຈົ້າຈົ່ງຮັບມໍລະດົກຕາມຕະກູນຂອງບັນພະບູລຸດຂອງເຈົ້າ 55ຖ້າພວກເຈົ້າ
ບໍ່ໄດ້ຂັບໄລ່ຊາວເມືອງນັ້ນອອກໃຫ້ພົ້ນໜ້າເຈົ້າ ຕໍ່ມາຜູ້ທີ່ເຈົ້າໃຫ້ເຫລືອຢູ່ນັ້ນກໍຈະກາຍເປັນສ້ຽນ
ໃນຕາຂອງເຈົ້າ ແລະເປັນໜາມທີ່ສີຂ້າງຂອງເຈົ້າ ແລະພວກເຂົາຈະຮຸກຮານເຈົ້າໃນແຜ່ນດິນທີ່
ເຈົ້າເຂົ້າອາໄສຢູ່ນັ້ນ 56ແລະຕໍ່ມາ ເຮົາຈະເຮັດແກ່ພວກເຈົ້າດັ່ງທີ່ເຮົາຄິດຈະປະຕິບັດແກ່ພວກ
ເຂົານັ້ນ"

# ບົດທີ 34

## ການທົບທວນການເດີນທາງຈາກເອຢິບ

1ພຣະຜູ້ເປັນເຈົ້າກ່າວກັບໂມເຊວ່າ 2"ຈົ່ງບອກຄົນອິສຣາເອນວ່າ ເມື່ອເຈົ້າເຂົ້າໄປໃນແຜ່ນ-
ດິນການາອານ (ອັນເປັນແຜ່ນດິນທີ່ເຮົາໃຫ້ແກ່ເຈົ້າເປັນມໍລະດົກ ຄືແຜ່ນດິນການາອານຕາມ
ເຂດແດນທັງໝົດ) ນັ້ນ
3ເຂດເບື້ອງໃຕ້ຂອງເຈົ້ານັບຈາກຖິ່ນແຫ້ງແລ້ງກັນດານຊິນຕາມເບື້ອງເອໂດມ ແລະອານາ-
ເຂດໃຕ້ຂອງເຈົ້ານັ້ນນັບຈາກປາຍທະເລຕາຍທາງທິດຕາເວັນອອກ 4ແລະອານາເຂດຂອງເຈົ້າ
ຈະລ້ຽວໄປທາງໃຕ້ເນີນສູງອັກຣັບບິມ ຂ້າມໄປຫາຖິ່ນແຫ້ງແລ້ງກັນດານຊິນໄປສຸດລົງທີ່ທິດໃຕ້
ກາເດັດ-ບາເນອາ ໄປຈົນຮອດຮາຊາ-ອັດດາ. ຜ່ານໄປຈົນຮອດອາຊະໂມນ 5ແລະອານາເຂດ
ຈະລ້ຽວຈາກອາຊະໂມນຫາແມ່ນ້ຳເອຢິບໄປສິ້ນສຸດລົງທີ່ທະເລ
6ອານາເຂດທາງທິດຕາເວັນຕົກ ເຈົ້າຈະໄດ້ທະເລເມດີຕາລາເນ ແລະຝັ່ງທະເລນັ້ນ ນີ້ຈະ
ເປັນເຂດແດນທາງທິດຕາເວັນຕົກຂອງເຈົ້າ
7ຕໍ່ໄປນີ້ ເປັນອານາເຂດທາງທິດເໜືອຂອງເຈົ້າ ຄືຈາກທະເລເມດີຕາລາເນ ເຈົ້າຈົ່ງເຮັດ
ເຄື່ອງໝາຍໄປຈົນຮອດພູເຂົາໂຮເຣ 8ຈາກພູເຂົາໂຮເຣ ເຈົ້າຈົ່ງເຮັດເຄື່ອງໝາຍເລື້ອຍໄປຈົນ
ຮອດທາງເຂົ້າເມືອງຮາມັດ ແລະປາຍສຸດຂອງອານາເຂດເບື້ອງນີ້ຄືເຊດາດ 9ແລ້ວອານາເຂດ

ຈະຍາວໄປຮອດຊີໂຟຣນ ໄປສິ້ນສຸດທີ່ຮາຊາ-ເອນັນ ນີ້ເປັນອານາເຂດທາງທິດເໜືອຂອງເຈົ້າ
[10]ເຈົ້າຈົ່ງເຮັດເຄື່ອງໝາຍອານາເຂດທາງທິດຕາເວັນອອກຂອງເຈົ້າຈາກຮາຊາ-ເອນັນທາ ເຊ-
ຟາມ [11]ແລະອານາເຂດຈະລົງມາຈາກ ເຊຟາມ ຮອດ ຣິບລາ ຂ້າງຕາເວັນອອກຂອງ ເມືອງ ອາອີນ
ແລະອານາເຂດຈະລົງມາເຖິງທີ່ສຸດປາຍທະເລ ກິນເນເຣດ[ກ] ທາງທິດຕາເວັນອອກ [12]ແລະອາ-
ນາເຂດ ຈະ ລົງ ມາຮອດ ແມ່ນ້ຳ ຢໍແດນ ສຸດ ລົງ ທີ່ທະເລຕາຍ ນີ້ ເປັນ ແຜ່ນດິນ ຂອງ ເຈົ້າຕາມອານາ-
ເຂດ ໂດຍຮອບ"
[13]ໂມເຊ ບອກຄົນ ອິສຣາເອນ ໂດຍກ່າວວ່າ "ນີ້ ເປັນ ແຜ່ນດິນທີ່ພວກເຈົ້າຈະ ໄດ້ ຈັບສະຫລາກ
ຮັບ ເປັນ ມໍລະດົກ ຊຶ່ງ ພຣະຜູ້ເປັນເຈົ້າ ຊົງ ສັ່ງວ່າ ໃຫ້ຍົກໃຫ້ທັງ ເກົ້າຕະກູນກັບອີກເຄິ່ງຕະກູນ
[14]ເພາະວ່າຕະກູນຄົນ ຣູເບັນ ຕາມບັນພະບູລຸດຂອງພວກເຂົາ ແລະຕະກູນຄົນ ຄາດ ຕາມບັນພະ-
ບູລຸດຂອງພວກເຂົາແມ່ນໄດ້ຮັບມໍລະດົກຂອງພວກເຂົາແລ້ວ ຄົນ ເຄິ່ງຕະກູນ ມານາເຊ ກໍໄດ້ຮັບ
ມໍລະດົກຂອງພວກເຂົາແລ້ວ [15]ທັງສອງຕະກູນ ແລະ ເຄິ່ງຕະກູນນັ້ນ ໄດ້ຮັບມໍລະດົກຂອງພວກ
ເຂົາທີ່ຟາກແມ່ນ້ຳຢໍແດນ ເບື້ອງນີ້ໃກ້ກັບ ເມືອງ ເຢຣິໂກ ທາງທິດຕາເວັນອອກ"
[16]ພຣະຜູ້ເປັນເຈົ້າ ກ່າວກັບ ໂມເຊວ່າ [17]"ຕໍ່ໄປນີ້ເປັນຊື່ບຸກຄົນທີ່ຈະ ແບ່ງດິນແດນ ແກ່ພວກເຈົ້າ
ຄື ເອເລອາຊາ ປະໂລຫິດ ແລະ ໂຢຊວຍ ລູກຊາຍ ນູນ [18]ເຈົ້າຈົ່ງນຳຫົວໜ້າຂອງຄົນທຸກຕະກູນໄປ
ແບ່ງດິນແດນເພື່ອເປັນມໍລະດົກ
[19]ຕໍ່ໄປນີ້ເປັນຊື່ຂອງຫົວໜ້າເຫລົ່ານັ້ນຄື

| | |
|---|---|
| ກາເລັບ ລູກຊາຍ ເຢຟຸນເນ | ຈາກຕະກູນ ຢູດາ |
| [20] ເຊມູເອນ ລູກຊາຍ ອຳມີຮຸດ | ຈາກຄົນຕະກູນຊີເມໂອນ |
| [21] ເອລີດາດ ລູກຊາຍ ກິຊະໂລນ | ຈາກຕະກູນ ເບັນຢາມິນ |
| [22] ບຸກກີ ລູກຊາຍ ໂຢກລີ | ຫົວໜ້າຄົນໜຶ່ງຈາກຕະກູນ ດານ |
| [23] ຮານນີເອນ ລູກຊາຍ ເອໂຟດ | ຫົວໜ້າຄົນໜຶ່ງຈາກລູກຫລານຂອງ ໂຢເຊັບ ຕະກູນ ມານາເຊ |
| [24] ເກມູເອນ ລູກຊາຍຊິບຕານ | ຫົວໜ້າຄົນໜຶ່ງຈາກຕະກູນຄົນ ເອຟຣາຢິມ |
| [25] ເອລີຊາຟັນ ລູກຊາຍ ປານັກ | ຫົວໜ້າຄົນໜຶ່ງຈາກຕະກູນຄົນ ເຊບູລູນ |
| [26] ປັນຕີເອນ ລູກຊາຍ ອັດຊານ | ຫົວໜ້າຄົນໜຶ່ງຈາກຕະກູນຄົນ ອິດຊາຄາ |
| [27] ອາຮີຮູດ ລູກຊາຍ ເຊໂລມີ | ຫົວໜ້າຄົນໜຶ່ງຈາກຕະກູນຄົນ ອາເຊ |
| [28] ເປດາເອນ ລູກຊາຍ ອຳມີຮຸດ | ຫົວໜ້າຄົນໜຶ່ງຈາກຕະກູນຄົນ ນັບທາລີ" |

[29]ບຸກຄົນ ເຫລົ່ານີ້ ເປັນ ຄົນທີ່ ພຣະຜູ້ເປັນເຈົ້າ ຊົງບອກ ໃຫ້ ແບ່ງ ມໍລະດົກ ໃຫ້ຄົນ ອິສຣາເອນ ໃນ
ແຜ່ນດິນ ການາອານ

---

[ກ]ທະເລກິນເນເຣດເປັນທະເລຄາລີເລ

# ບົດທີ 35

## ການຈັດຕຽມແບ່ງແຜ່ນດິນການາອານ

1ພຣະຜູ້ເປັນເຈົ້າກ່າວກັບ ໂມເຊ ໃນທົ່ງພຽງ ໂມອາບ ແຄມແມ່ນ້ຳຢໍແດນ ໃກ້ກັບເມືອງ ເຢຣິ-
ໂກ ວ່າ 2"ຈົ່ງບອກຄົນ ອິສຣາເອນ ໃຫ້ພວກເຂົາຍົກເມືອງໃຫ້ຄົນ ເລວີ ໄດ້ອາໄສຢູ່ຈາກມໍລະດົກ
ທີ່ພວກເຂົາໄດ້ຮັບນັ້ນ ແລະຍົກທົ່ງຫຍ້າອ້ອມຮອບເມືອງນັ້ນໃຫ້ຄົນ ເລວີ ດ້ວຍ 3ໃຫ້ເມືອງນັ້ນ
ເປັນຂອງພວກເຂົາເພື່ອຈະໄດ້ອາໄສຢູ່ ໃຫ້ທົ່ງຫຍ້າ ເພື່ອຝູງສັດ ແລະຊັບສິ່ງຂອງ ແລະສັດ
ທັງຫລາຍຂອງພວກເຂົາ 4ທົ່ງຫຍ້າຂອງເມືອງທີ່ເຈົ້າຍົກໃຫ້ແກ່ຄົນ ເລວີ ນັ້ນໃຫ້ມີເຂດຈາກກຳ-
ແພງເມືອງ ແລະຫ່າງອອກໄປໜຶ່ງພັນສອກໂດຍຮອບ

5ແລະເຈົ້າຈົ່ງວັດແທກພາຍນອກເມືອງສອງພັນສອກເປັນດ້ານຕາເວັນອອກ ສອງພັນສອກ
ເປັນທິດໃຕ້ ສອງພັນສອກເປັນທິດຕາເວັນຕົກ ສອງພັນສອກເປັນທິດເໜືອ ໃຫ້ຕົວເມືອງຢູ່ກາງ
ນີ້ເປັນທົ່ງຫຍ້າປະຈຳເມືອງເຫລົ່ານັ້ນ 6ເມືອງຊຶ່ງເຈົ້າຈະຍົກໃຫ້ແກ່ຄົນ ເລວີ ຄື ເມືອງລີ້ໄພຫົກ
ເມືອງ ເຈົ້າຈະອະນຸຍາດໃຫ້ຄົນຂ້າຄົນໜີໄປຢູ່ ແລະເຈົ້າຈົ່ງເພີ່ມໃຫ້ພວກເຂົາອີກສີ່ສິບສອງ
ເມືອງ

7ເມືອງທັງໝົດທີ່ເຈົ້າຍົກໃຫ້ຄົນ ເລວີ ເປັນສີ່ສິບແປດຫົວເມືອງ ມີທົ່ງຫຍ້າຕາມເມືອງຕ່າງໆ
ດ້ວຍ 8ແລະຫົວເມືອງທີ່ເຈົ້າຈະໃຫ້ພວກເຂົາຈາກກຳມະສິດຂອງຄົນ ອິສຣາເອນ ນັ້ນ ຈາກຕະກູນ
ໃຫຍ່ເຈົ້າກໍເອົາເມືອງອ່າວຫລາຍ ຈາກຕະກູນນ້ອຍເຈົ້າກໍເອົາເມືອງນ້ອຍ ທຸກຕະກູນຕາມສ່ວນ
ຂອງມໍລະດົກທີ່ຕົນໄດ້ຮັບ ໃຫ້ຍົກໃຫ້ແກ່ຄົນ ເລວີ"

9ພຣະຜູ້ເປັນເຈົ້າ ກ່າວກັບ ໂມເຊ ວ່າ 10"ຈົ່ງກ່າວ ແກ່ຄົນ ອິສຣາເອນ ວ່າ ເມື່ອພວກເຈົ້າຂ້າມ
ແມ່ນ້ຳຢໍແດນ ເຂົ້າໄປໃນແຜ່ນດິນ ການາອານ 11ເຈົ້າຈົ່ງເລືອກເມືອງໃຫ້ເປັນເມືອງລີ້ໄພສຳລັບ
ເຈົ້າ ເພື່ອຄົນທີ່ຂ້າຄົນ ໂດຍບໍ່ໄດ້ເຈດຕະນາຈະຫລົບໜີໄປຢູ່ບ່ອນນັ້ນໄດ້ 12ໃຫ້ເມືອງເຫລົ່ານັ້ນ
ເປັນເມືອງລີ້ໄພຈາກຜູ້ທີ່ອາຄາດ ເພື່ອບໍ່ໃຫ້ຜູ້ຂ້າຄົນຈະຕ້ອງຕາຍກ່ອນທີ່ລາວຈະຢືນຕໍ່ໜ້າຊຸມ-
ນຸມຊົນເພື່ອຮັບການພິພາກສາ 13ແລະເມືອງທີ່ເຈົ້າຍົກໃຫ້ນັ້ນໃຫ້ເປັນເມືອງລີ້ໄພຫົກເມືອງ

14ເຈົ້າຈົ່ງໃຫ້ຟາກແມ່ນ້ຳຢໍແດນ ເບື້ອງນີ້ສາມເມືອງ ແລະອີກສາມເມືອງໃນແຜ່ນດິນ ການາ-
ອານ ໃຫ້ເປັນເມືອງລີ້ໄພ 15ທັງຫົກເມືອງນີ້ໃຫ້ເປັນເມືອງລີ້ໄພຂອງຄົນ ອິສຣາເອນ ແລະສຳລັບ
ຄົນຕ່າງດ້າວ ແລະສຳລັບຄົນທີ່ອາໄສຢູ່ທ່າມກາງພວກເຂົາ ເພື່ອຄົນໜຶ່ງຄົນໃດທີ່ໄດ້ຂ້າຜູ້ອື່ນ
ໂດຍບໍ່ໄດ້ເຈດຕະນາຈະໄດ້ຫລົບໜີໄປບ່ອນນັ້ນ

16ຖ້າຜູ້ໃດຕີຄົນອື່ນດ້ວຍເຄື່ອງມືເຫລັກຈົນຄົນນັ້ນຕາຍ ລາວກໍເປັນຜູ້ຂ້າຄົນ ໃຫ້ປະຫານຊີ-
ວິດຄົນນັ້ນ 17ຜູ້ໃດຕີລາວໃຫ້ລົ້ມລົງດ້ວຍກ້ອນຫີນໃນມືທີ່ມີຂະໜາດຂ້າຄົນໄດ້ ແລະລາວຕາຍ
ຜູ້ນັ້ນເປັນຜູ້ຂ້າຄົນ ໃຫ້ປະຫານຊີວິດຄົນນັ້ນ 18ຫລືຜູ້ໃດໃຊ້ອາວຸດໄມ້ທີ່ຢູ່ໃນມືທີ່ມີຂະໜາດຂ້າ
ຄົນໄດ້ ຕີລາວລົ້ມລົງ ແລະຕາຍ ຜູ້ນັ້ນເປັນຜູ້ຂ້າຄົນ ໃຫ້ປະຫານຊີວິດຄົນນັ້ນເສຍ 19ໃຫ້ຜູ້ທີ່
ຄຽດແຄ້ນເອງເປັນຜູ້ປະຫານຊີວິດຄົນນັ້ນ ຖ້າຜູ້ທີ່ຄຽດແຄ້ນພົບລາວເມື່ອໃດກໍໃຫ້ປະຫານຊີວິດ
ເມື່ອນັ້ນ

20ຖ້າຜູ້ໃດແທງລາວດ້ວຍຄວາມກຽດຊັງ ຫລືຄອຍຖ້າແກວ່ງກ້ອນຫີນໃສ່ລາວຈົນຕາຍ 21ຫລື

ເພາະເປັນສັດຕູກັນຕີລາວລົ້ມລົງ ຈົນລາວຕາຍ ໃຫ້ປະຫານຊີວິດຜູ້ທີ່ເຮັດໃຫ້ລາວຕາຍນັ້ນ ລາວ
ເປັນຄົນຂ້າຄົນ ເມື່ອຜູ້ຄຽດແຄ້ນພົບລາວເມື່ອໃດ ກໍໃຫ້ປະຫານຊີວິດລາວ
22ຖ້າຜູ້ໃດບໍ່ໄດ້ເປັນສັດຕູກັນແທງລາວ ຫລືເອົາຫຍັງແກວ່ງໃສ່ລາວໂດຍບໍ່ໄດ້ຄອຍຖ້າດັກ
ໂຈມຕີຢູ່ 23ຫລືໃຊ້ກ້ອນຫີນທີ່ມີຂະໜາດຂ້າຄົນໄດ້ແກວ່ງຖືກລາວໂດຍບໍ່ໄດ້ເຫັນ ແລະລາວຕາຍ
ທັງທີ່ລາວບໍ່ໄດ້ເປັນສັດຕູ ແລະບໍ່ໄດ້ປອງຮ້າຍກັນ 24ກໍໃຫ້ຊຸມນຸມຊົນຕັດສິນຄວາມລະຫວ່າງຜູ້
ຂ້າ ແລະຜູ້ຄຽດແຄ້ນຕາມຄໍາຕັດສິນນີ້ 25ໃຫ້ຊຸມນຸມຊົນຊ່ວຍຜູ້ຂ້າໃຫ້ພົ້ນຈາກມືຜູ້ຂອງຄຽດແຄ້ນ
ໃຫ້ຊຸມນຸມຊົນພາຕົວລາວກັບໄປເມືອງລີ້ໄພ ຊຶ່ງລາວໄດ້ໜີໄປຢູ່ນັ້ນ ໃຫ້ລາວຢູ່ບ່ອນນັ້ນຈົນກວ່າ
ມະຫາປະໂລຫິດຜູ້ໄດ້ຖືກເຈີມໄວ້ດ້ວຍນໍ້າມັນບໍລິສຸດຈະຕາຍເສຍກ່ອນ 26ຖ້າຜູ້ຂ້າຄົນອອກໄປ
ຈາກເຂດເມືອງລີ້ໄພເວລາໃດ 27ແລະຜູ້ຄຽດແຄ້ນພົບລາວນອກເຂດເມືອງລີ້ໄພ ແລະຜູ້ຄຽດ
ແຄ້ນໄດ້ຂ້າຜູ້ຂ້າຄົນນັ້ນ ຜູ້ທີ່ຄຽດແຄ້ນຈະບໍ່ມີຄວາມຜິດໃດໆ 28ເພາະວ່າຊາຍຜູ້ນັ້ນຕ້ອງຢູ່ໃນ
ເຂດເມືອງລີ້ໄພຈົນມະຫາປະໂລຫິດຕາຍກ່ອນ ຫລັງຈາກທີ່ມະຫາປະໂລຫິດຕາຍແລ້ວ ຜູ້ຂ້າຄົນ
ນັ້ນຈຶ່ງຈະສາມາດກັບໄປຍັງແຜ່ນດິນທີ່ເຂົາຖືກໍາມະສິດຢູ່ໄດ້ 29ສິ່ງເຫລົ່ານີ້ຄວນເປັນກົດເກນ
ແຫ່ງຄໍາຕັດສິນຂອງເຈົ້າຕະຫລອດຊົ່ວອາຍຸຂອງເຈົ້າໃນທີ່ອາໄສທັງປວງຂອງເຈົ້າ
30ຜູ້ໃດຂ້າລາວຕາຍ ໃຫ້ປະຫານຊີວິດຜູ້ນັ້ນຕາມປາກຂອງພະຍານ ແຕ່ຢ່າປະຫານຊີວິດຜູ້
ໃດດ້ວຍມີພະຍານປາກດຽວ 31ຍິ່ງກວ່ານັ້ນອີກ ເຈົ້າຢ່າຮັບຄ່າໄຖ່ຊີວິດຂອງຜູ້ຂ້າຄົນ ຜູ້ມີຄວາມ
ຜິດເຖິງຕາຍນັ້ນ ແຕ່ລາວຕ້ອງຕາຍ 32ແລະເຈົ້າຢ່າຮັບຄ່າໄຖ່ຄົນທີ່ຫລົບໜີໄປຍັງເມືອງລີ້ໄພ
ເພື່ອໃຫ້ກັບມາຢູ່ໃນແຜ່ນດິນຂອງລາວ ກ່ອນທີ່ມະຫາປະໂລຫິດຈະຕາຍ
33ດ້ວຍວິທີນີ້ ເຈົ້າຈຶ່ງບໍ່ເຮັດໃຫ້ແຜ່ນດິນທີ່ພວກເຈົ້າອາໄສຢູ່ມີມົນທິນ ເພາະວ່າເລືອດເຮັດໃຫ້
ແຜ່ນດິນເປັນມົນທິນ ແລະບໍ່ມີສິ່ງໃດທີ່ຈະຊໍາລະແຜ່ນດິນໃຫ້ໝົດມົນທິນທີ່ເກີດຂຶ້ນຈາກເລືອດ
ໃນແຜ່ນດິນນັ້ນໄດ້ ນອກຈາກຈະປະຫານຜູ້ທີ່ເຮັດໃຫ້ເລືອດຕົກເສຍກ່ອນ 34ເຈົ້າຢ່າເຮັດໃຫ້ເກີດ
ມົນທິນໃນແຜ່ນດິນທີ່ເຈົ້າອາໄສຢູ່ ທີ່ເຮົາຢູ່ທ່າມກາງ ເພາະວ່າເຮົາຄືພຣະຜູ້ເປັນເຈົ້າທີ່ຢູ່ທ່າມ-
ກາງຄົນອິສຣາເອນ”

# ບົດທີ 36

## ເມືອງລີ້ໄພ

1ຫົວໜ້າຄອບຄົວຄົນກີເລອາດ ລູກຊາຍຂອງມາກີ ຜູ້ເປັນລູກຊາຍມານາເຊ ຄອບຄົວ
ຕ່າງໆຂອງລູກຊາຍໂຢເຊັບ ເຂົ້າມາໃກ້ ແລະເວົ້າຕໍ່ໜ້າໂມເຊ ແລະຕໍ່ໜ້າຫົວໜ້າ ຄືບັນດາ
ຫົວໜ້າຄົນອິສຣາເອນ 2ພວກເຂົາເວົ້າວ່າ “ພຣະຜູ້ເປັນເຈົ້າໄດ້ບອກເຈົ້ານາຍຂອງຂ້ານ້ອຍໃຫ້
ຈັບສະຫລາກຍົກແຜ່ນດິນ ໃຫ້ເປັນມໍລະດົກແກ່ຄົນອິສຣາເອນ ແລະເຈົ້ານາຍຂອງຂ້ານ້ອຍໄດ້
ຮັບບັນຊາຈາກພຣະຜູ້ເປັນເຈົ້າໃຫ້ຍົກມໍລະດົກຂອງເຊໂລເຟຂາດພີ່ນ້ອງຂອງພວກເຮົາແກ່ລູກ
ສາວຂອງລາວ 3ຖ້ານາງທັງຫລາຍແຕ່ງງານກັບລູກຊາຍທັງຫລາຍຂອງຄົນອິສຣາເອນຕະກູນ
ອື່ນແລ້ວ ສ່ວນມໍລະດົກຂອງ ບັນພະບູລຸດຂອງພວກເຮົາຈະເພີ່ມໃຫ້ກັບມໍລະດົກຂອງຄົນຕະກູນ
ທີ່ນາງໄປຢູ່ນໍາ ເພາະສະນັ້ນຈຶ່ງເປັນການນໍາມໍລະດົກໄປຈາກສ່ວນທີ່ເປັນຂອງພວກເຮົາ 4ແລະ

ເມື່ອເຖິງປີແຫ່ງສຽງເຂົາສັດຂອງຄົນ ອິສຣາເອນ ມໍລະດົກທີ່ເປັນສ່ວນຂອງນາງກໍຈະຖືກຍົກໄປ
ເພີ່ມເຂົ້າກັບສ່ວນຂອງຕະກູນທີ່ນາງໄປຢູ່ນຳ ຈຶ່ງເປັນການນຳເອົາສ່ວນມໍລະດົກຂອງນາງໄປ
ຈາກສ່ວນມໍລະດົກຂອງຕະກູນພໍ່ຂອງພວກເຮົາ”

5ແລະ ໂມເຊ ບອກຄົນ ອິສຣາເອນ ຕາມພຣະຄຳສັ່ງຂອງ ພຣະຜູ້ເປັນເຈົ້າ ວ່າ “ຕະກູນຄົນ ໂຢ-
ເຊັບ ເວົ້າຖືກຕ້ອງແລ້ວ 6ນີ້ຄືສິ່ງທີ່ ພຣະຜູ້ເປັນເຈົ້າ ໄດ້ບັນຊາກ່ຽວກັບລູກສາວຂອງ ເຊໂລເຟ-
ຂາດ ວ່າ ‘ຈົ່ງໃຫ້ນາງແຕ່ງງານກັບໃຜກໍໄດ້ທີ່ນາງພໍໃຈ ແຕ່ນາງຕ້ອງແຕ່ງງານກັບຄົນພາຍໃນ
ຄອບຄົວຕະກູນພໍ່ຂອງນາງເທົ່ານັ້ນ 7ດັ່ງນີ້ແຫລະ ສ່ວນມໍລະດົກຂອງຄົນ ອິສຣາເອນ ຈະບໍ່ຖືກ
ຍົກຍ້າຍຈາກຕະກູນໜຶ່ງໄປໃຫ້ອີກຕະກູນໜຶ່ງຄົນ ອິສຣາເອນ ທຸກຄົນຕ້ອງຢູ່ໃນມໍລະດົກຂອງຕະ-
ກູນບັນພະບູລຸດຂອງຕົນ 8ແລະລູກສາວທຸກຄົນ ຜູ້ທີ່ຮັບກຳມະສິດມໍລະດົກໃນຕະກູນ ອິສຣາ-
ເອນ ຕະກູນໃດ ກໍໃຫ້ເປັນເມຍຂອງຄົນໃດຄົນໜຶ່ງໃນຄອບຄົວໃນຕະກູນພໍ່ຂອງຕົນ ເພື່ອຄົນ ອິ-
ສຣາເອນ ທຸກຄົນຈະໄດ້ຖືກຳມະສິດມໍລະດົກຂອງພໍ່ຂອງພວກເຂົາ 9ດັ່ງນັ້ນ ຈະບໍ່ມີມໍລະດົກທີ່
ຖືກໂຍກຍ້າຍຈາກຕະກູນໜຶ່ງໄປອີກຕະກູນໜຶ່ງ ເພາະວ່າຄົນ ອິສຣາເອນ ແຕ່ລະຕະກູນຄວນຢູ່
ໃນທີ່ມໍລະດົກຂອງຕົນ’”

10ພຣະຜູ້ເປັນເຈົ້າ ຊົງບອກ ໂມເຊ ຢ່າງໃດ ລູກສາວທັງຫລາຍຂອງ ເຊໂລເຟຂາດ ກໍປະຕິບັດ
ຢ່າງນັ້ນ 11ເພາະວ່າ ມາລາ ຕີຣະຊາ ໂຮກລາ ມີລະກາ ແລະ ໂນອາ ລູກສາວຂອງ ເຊໂລເຟ-
ຂາດ ໄດ້ແຕ່ງງານກັບລູກຊາຍທັງຫລາຍຂອງພີ່ນ້ອງພໍ່ຂອງຕົນ 12ນາງໄດ້ແຕ່ງງານກັບຄອບຄົວ
ມານາເຊ ລູກຊາຍຂອງ ໂຢເຊັບ ແລະສ່ວນມໍລະດົກຂອງນາງກໍຍັງຢູ່ໃນຕະກູນພໍ່ຂອງນາງ

13ຂໍ້ຄວາມ ເຫລົ່ານີ້ ເປັນບົດບັນຍັດ ແລະຄຳຕັດສິນຊຶ່ງ ພຣະຜູ້ເປັນເຈົ້າ ໄດ້ຊົງສັ່ງຜ່ານທາງ
ໂມເຊ ແກ່ຄົນ ອິສຣາເອນ ໃນທົ່ງພຽງ ໂມອາບ ແຄມແມ່ນ້ຳຢໍແດນ ໃກ້ກັບເມືອງ ເຢຣິໂກ

* * *

# ພຣະບັນຍັດສອງ

## ບົດທີ 1

1ໜັງສືພຣະທຳນີ້ ແມ່ນຖ້ອຍຄຳທີ່ ໂມເຊ ໄດ້ບອກປະຊາຊົນ ອິສຣາເອນ ເມື່ອຄາວພວກເຂົາຢູ່
ໃນຖິ່ນແຫ້ງແລ້ງກັນດານຟາກຕາເວັນອອກຂອງແມ່ນ້ຳຢໍແດນ ຄື ໃນຮ່ອມພູຢໍແດນໃກ້ໆຊູຟະ
ລະຫວ່າງ ເມືອງ ປາຣານ ໂຕເຟັນ ລາບານ ຮາເຊໂຣດ ແລະ ດີຊາຮັບ. 2ຫົນທາງຕາມສາຍພູໃນ
ປະເທດ ເອໂດມ ຕັ້ງແຕ່ພູຊີນາຍ ໄປເຖິງ ກາເດັດ-ບາເນອາ ເປັນໄລຍະທາງຍ່າງສິບເອັດມື້ພາຍ-
ຫລັງທີ່ພວກເຂົາອອກຈາກ ເອຢິບ ແລ້ວ. 3ໃນວັນທີໜຶ່ງເດືອນທີສິບເອັດປີທີສີ່ສິບ ໂມເຊ ໄດ້ບອກ
ຊາວ ອິສຣາເອນ ທຸກຢ່າງຕາມທີ່ ພຣະຜູ້ເປັນເຈົ້າ ຊົງສັ່ງໄວ້. 4ຄືຫລັງຈາກທີ່ຕີຊະນະ ສີໂຮນ ກະ-
ສັດ ອະໂມຣິດ ຜູ້ຊົງປົກຄອງ ເມືອງ ເຮັດຊະໂບນ ແລະກະສັດ ໂອກ ຂອງຊາວ ບາຊານ ຜູ້ຊົງປົກ-
ຄອງ ເມືອງ ອັດຊະຕະໂຣດ ແລະ ເມືອງ ເອັດເຣອີ ແລ້ວ. 5ໂມເຊ ໄດ້ເລີ່ມອະທິບາຍພຣະທຳ ແລະ
ຄຳສອນນີ້ໃຫ້ແກ່ປະຊາຊົນຢູ່ໃນເຂດແດນ ໂມອາບ ຟາກຕາເວັນອອກຂອງແມ່ນ້ຳຢໍແດນວ່າ,

6ເມື່ອພວກເຮົາຢູ່ທີ່ພູຊີນາຍ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງເຮົາໄດ້ຊົງບອກວ່າ, "ພວກເຈົ້າ
ໄດ້ພັກຢູ່ພູນີ້ເຫິງນານແລ້ວ. 7ບັດນີ້ ຈົ່ງມ້າງຄ້າຍແລ້ວອອກເດີນທາງໄປຍັງດິນແດນສາຍພູຂອງ
ຊາວ ອະໂມຣິດ ຕາມບ່ອນຕ່າງໆ ທີ່ເພື່ອນບ້ານຂອງພວກເຂົາອາໄສຢູ່ຄື ຮ່ອມພູຢໍແດນ ສາຍພູ
ນ້ອຍບ່ອນດິນຕ່ຳ ດິນແດນພາກໃຕ້ ແລະຢູ່ແຄມທະເລ ເມດີແຕຣາເນ ຈົນຮອດດິນແດນຂອງ
ຊາວ ການາອານ ແລະເທິງພູ ເລບານອນ ເລີຍໄປຈົນຮອດແມ່ນ້ຳໃຫຍ່ ເອຟຣາດ. 8ຈົ່ງເບິ່ງແມ
ນັ້ນແມ່ນດິນແດນທີ່ເຮົາໄດ້ສັນຍາວ່າຈະຍົກໃຫ້ ອັບຣາຮາມ ອີຊາກ ຢາໂຄບ ບັນພະບູລຸດ
ຂອງພວກເຈົ້າ ແລະເຊື້ອສາຍທັງຫລາຍຂອງພວກເຂົາ ພວກເຈົ້າຈົ່ງເຂົ້າໄປຍຶດຄອງເອົາເທີ້ນ."
9ໃນຄາວນັ້ນ ຂ້າພະເຈົ້າໄດ້ບອກທ່ານທັງຫລາຍວ່າ 'ຂ້າພະເຈົ້າຜູ້ດຽວແບກພວກທ່ານທັງຫລາຍ
ບໍ່ໄຫວ 10ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງທ່ານ ໄດ້ຊົງ ໃຫ້ທ່ານ ທັງຫລາຍ ເພີ່ມທະວີຫລາຍຂຶ້ນ
ແລະເບິ່ງແມ ທຸກມື້ນີ້ພວກທ່ານມີຈຳນວນຫລາຍເໝືອນດັ່ງດວງດາວໃນທ້ອງຟ້າ 11ຂໍ ພຣະຜູ້-
ເປັນເຈົ້າ ພຣະເຈົ້າ ແຫ່ງບັນພະບູລຸດຂອງທ່ານທັງຫລາຍຊົງເຮັດໃຫ້ທ່ານທັງຫລາຍເພີ່ມທະວີຂຶ້ນ
ພັນເທົ່າແລະຊົງອຳນວຍພຣະພອນແກ່ທ່ານ ດັ່ງທີ່ພຣະອົງໄດ້ຊົງສັນຍາໄວ້ແກ່ທ່ານທັງຫລາຍ
ແລ້ວນັ້ນ 12ຂ້າພະເຈົ້າຄົນດຽວຈະແບກຮັບທ່ານທັງຫລາຍຜູ້ເປັນພາລະ ແລະເປັນຄວາມຍາກ
ລຳບາກ ແລະການຖົກຖຽງຂອງພວກທ່ານໄດ້ຢ່າງໃດ 13ຈົ່ງເລືອກຄົນທີ່ມີປັນຍາ ມີຄວາມເຂົ້າ-
ໃຈ ແລະມີຊື່ສຽງດີຕາມຕະກູນຂອງທ່ານທັງຫລາຍ ແລະຂ້າພະເຈົ້າຈະຕັ້ງພວກເຂົາໃຫ້ເປັນ
ຫົວໜ້າຂອງພວກທ່ານ' 14ທ່ານທັງຫລາຍໄດ້ຕອບຂ້າພະເຈົ້າວ່າ 'ສິ່ງທີ່ທ່ານກ່າວມານັ້ນເປັນ
ການດີແລ້ວ ພວກຂ້າພະເຈົ້າທັງຫລາຍຈະປະຕິບັດຕາມ' 15ຂ້າພະເຈົ້າຈຶ່ງໄດ້ເລືອກເອົາຫົວໜ້າ
ຈາກທຸກຕະກູນ ຊຶ່ງເປັນຄົນມີປັນຍາ ແລະມີຊື່ສຽງດີຕັ້ງໄວ້ເປັນໃຫຍ່ເໜືອທ່ານທັງຫລາຍ ໃຫ້
ເປັນນາຍພັນ ນາຍຮ້ອຍ ນາຍຫ້າສິບ ນາຍສິບ ແລະພະນັກງານຕ່າງໆຕາມຕະກູນຂອງທ່ານ
16ໃນຄາວນັ້ນ ຂ້າພະເຈົ້າໄດ້ສັ່ງພວກຕຸລາການ ຜູ້ປົກຄອງຂອງທ່ານທັງຫລາຍວ່າ 'ຈົ່ງພິຈາ-

ລະນາຄະດີຂອງພີ່ນ້ອງ ແລະຕັດສິນຄວາມຕາມຄວາມຍຸດຕິທຳລະຫວ່າງຊາຍຄົນໜຶ່ງ ແລະພີ່-
ນ້ອງຂອງຕົນ ຫລືຄົນຕ່າງດ້າວທີ່ອາໄສຢູ່ກັບພວກທ່ານ [17]ທ່ານທັງຫລາຍຢ່າລຳອຽງໃນການພິ-
ພາກສາ ຈົ່ງຟັງຜູ້ນ້ອຍແລະຜູ້ໃຫຍ່ໃຫ້ຄືກັນ ທ່ານທັງຫລາຍຢ່າຊູຢ້ານໜ້າມະນຸດເລີຍ ເພາະວ່າ
ການພິພາກສານັ້ນເປັນງານຂອງ ພຣະເຈົ້າ ແລະຄະດີໃດທີ່ຍາກເກີນໄປສຳລັບທ່ານຈົ່ງນຳມາ
ໃຫ້ຂ້າພະເຈົ້າ ຂ້າພະເຈົ້າຈະພິຈາລະນາເອງ'
[18]ໃນ ຄາວ ນັ້ນ ຂ້າພະເຈົ້າ ໄດ້ ສັ່ງ ທ່ານ ທັງຫລາຍ ເຖິງ ບັນດາ ສິ່ງ ທີ່ ພວກ ທ່ານ ຕ້ອງ ປະຕິບັດ
[19]ເຮົາໄດ້ອອກໄປຈາກ ໂຮເຣັບ ເດີນທາງຜ່ານຖິ່ນແຫ້ງແລ້ງກັນດານໃຫຍ່ອັນເປັນໜ້າຢ້ານ ຕາມ
ທີ່ທ່ານ ທັງຫລາຍໄດ້ເຫັນນັ້ນ ເດີນທາງໄປຕາມພູເຂົາຂອງຄົນ ອະໂມຣິດ ດັ່ງທີ່ ພຣະຜູ້ເປັນ-
ເຈົ້າ ພຣະເຈົ້າ ຂອງເຮົາໄດ້ສັ່ງເຮົາໄວ້ ແລະເຮົາມາເຖິງ ກາເດັດ-ບາເນອາ [20]ແລະຂ້າພະເຈົ້າໄດ້
ກ່າວແກ່ທ່ານທັງຫລາຍວ່າ 'ພວກທ່ານມາເຖິງພູເຂົາຂອງຄົນ ອະໂມຣິດ ແລ້ວ ເປັນບ່ອນທີ່ ພຣະ-
ຜູ້ເປັນເຈົ້າ ພຣະເຈົ້າ ຂອງ ເຮົາປະທານ ໃຫ້ແກ່ເຮົາທັງຫລາຍ [21]ເບິ່ງແມ ພຣະຜູ້ເປັນເຈົ້າ ພຣະ-
ເຈົ້າ ຂອງພວກທ່ານໄດ້ຊົງຕັ້ງແຜ່ນດິນນັ້ນໄວ້ຕໍ່ໜ້າທ່ານແລ້ວ ຈົ່ງຂຶ້ນໄປຍຶດແຜ່ນດິນນັ້ນ ຕາມທີ່
ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງບັນພະບູລຸດຂອງພວກທ່ານໄດ້ສັ່ງໄວ້ ຢ່າຢ້ານ ຫລືຢ່າຕົກໃຈໄປ'
[22]ແລ້ວທ່ານທັງຫລາຍທຸກຄົນໄດ້ຫຍັບເຂົ້າມາຫາຂ້າພະເຈົ້າເວົ້າວ່າ 'ໃຫ້ເຮົາທັງຫລາຍໃຊ້ຄົນໄປ
ກ່ອນເຮົາ ແລະສອດແນມເບິ່ງແຜ່ນດິນນັ້ນແທນເຮົາ ນຳຂ່າວເລື່ອງທາງທີ່ເຮົາຈະຕ້ອງຂຶ້ນໄປ
ແລະເລື່ອງຫົວເມືອງທີ່ເຮົາຈະໄປນັ້ນມາໃຫ້ເຮົາ' [23]ເລື່ອງນັ້ນຂ້າພະເຈົ້າເຫັນດີ ຂ້າພະເຈົ້າຈຶ່ງໄດ້
ເລືອກສິບສອງຄົນມາຈາກທ່ານທັງຫລາຍ ຕະກູນລະຄົນ [24]ແລ້ວຄົນເຫລົ່ານັ້ນໄດ້ພາກັນຂຶ້ນໄປ
ພູເຂົາ ມາຮອດຮ່ອມພູເຂົາ ເອັດຊະໂຄນ ແລະສອດແນມເບິ່ງແຜ່ນດິນນັ້ນ [25]ພວກເຂົາໄດ້ເອົາ
ໝາກໄມ້ເມືອງນັ້ນຕິດມືມາໃຫ້ເຮົາທັງຫລາຍ ແລະນຳຂ່າວມາໃຫ້ເຮົາວ່າ 'ບ່ອນທີ່ ພຣະຜູ້ເປັນ-
ເຈົ້າ ພຣະເຈົ້າ ຂອງເຮົາປະທານແກ່ເຮົານັ້ນເປັນແຜ່ນດິນທີ່ດີ'
[26]ແຕ່ວ່າພວກທ່ານທັງຫລາຍກໍບໍ່ຍອມຂຶ້ນໄປ ໂດຍຂັດຂືນພຣະບັນຊາຂອງ ພຣະຜູ້ເປັນເຈົ້າ
ພຣະເຈົ້າ ຂອງ ທ່ານ ທັງຫລາຍ [27]ແລະ ພວກ ທ່ານ ໄດ້ ຈົ່ມຢູ່ ໃນ ເຕັນ ຂອງ ຕົນ ແລະ ກ່າວ ວ່າ
'ເພາະວ່າ ພຣະຜູ້ເປັນເຈົ້າ ຊົງກຽດຊັງພວກເຮົາ ພຣະອົງຈຶ່ງຊົງພາ ເຮົາທັງຫລາຍອອກມາຈາກ
ແຜ່ນດິນ ເອຢິບ ເພື່ອຈະໄດ້ມອບພວກເຮົາໄວ້ໃນມືຂອງຄົນ ອະໂມຣິດ ໃຫ້ຈະທຳລາຍເຮົາ [28]ເຮົາ
ທັງຫລາຍຈະຂຶ້ນໄປຢູ່ໃສ ພວກພີ່ນ້ອງຂອງ ເຮົາໄດ້ເຮັດໃຫ້ພວກເຮົາຕົກໃຈໂດຍກ່າວວ່າ "ຄົນ
ປະເທດເຫລົ່ານັ້ນໃຫຍ່ກວ່າ ແລະສູງກວ່າພວກເຮົາອີກ ເມືອງເຫລົ່ານັ້ນກໍໃຫຍ່ມີກຳແພງສູງພຽງ
ຟ້າ ແລະຫລາຍກວ່ານັ້ນ ເຮົາໄດ້ເຫັນພວກຄົນ ອານາກ ຢູ່ບ່ອນນັ້ນດ້ວຍ" [29]ແລ້ວຂ້າພະເຈົ້າຈຶ່ງ
ໄດ້ເວົ້າກັບທ່ານທັງຫລາຍວ່າ 'ຢ່າຊູຕົກໃຈ ຫລືຢ່າຊູຢ້ານພວກເຂົາ [30]ພຣະຜູ້ເປັນເຈົ້າ ພຣະເຈົ້າ
ຂອງທ່ານຜູ້ນຳໜ້າທ່ານທັງຫລາຍ ພຣະອົງຈະຊົງຕໍ່ສູ້ເພື່ອພວກທ່ານດັ່ງທີ່ພຣະອົງໄດ້ຊົງເຮັດໃຫ້
ແກ່ທ່ານທັງຫລາຍໃນ ເອຢິບ ຕໍ່ໜ້າຕໍ່ຕາທ່ານນັ້ນ [31]ແລະ ໃນຖິ່ນ ແຫ້ງແລ້ງກັນດານ ໃນທີ່ນັ້ນ
ພວກທ່ານໄດ້ເຫັນ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງທ່ານຊົງອຸ້ມຊູພວກທ່ານດັ່ງພໍ່ອຸ້ມລູກຊາຍຂອງ
ຕົນ ຕະຫລອດທາງທີ່ທ່ານໄດ້ໄປນັ້ນ ຈົນທ່ານທັງຫລາຍໄດ້ມາຮອດບ່ອນນີ້' [32]ແຕ່ຢ່າງໃດກໍ
ຕາມ ພວກທ່ານບໍ່ໄດ້ເຊື່ອ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງທ່ານທັງຫລາຍ [33]ຜູ້ໄດ້ຊົງນຳໜ້າທ່ານ

ເພື່ອຈະຫາບ່ອນໃຫ້ທ່ານທັງຫລາຍຕັ້ງເຕັນຂອງຕົນ ໂດຍຊົງເປັນໄຟໃນກາງຄືນ ເພື່ອໂຜດໃຫ້
ພວກທ່ານເຫັນທາງທີ່ຈະໄປ ແລະເປັນເມກໃນກາງເວັນ

34ພຣະຜູ້ເປັນເຈົ້າ ໄດ້ສະດັບຮັບຟັງສຽງຂອງທ່ານທັງຫລາຍ ຈຶ່ງຊົງຄຽດຮ້າຍ ແລະປະຕິ-
ຍານວ່າ 35'ຈະບໍ່ມີຜູ້ໃດໃນລຸ້ນທີ່ຊົ່ວຊ້ານີ້ຈັກຄົນໜຶ່ງທີ່ຈະໄດ້ເຫັນແຜ່ນດິນດີນັ້ນທີ່ເຮົາໄດ້ປະຕິ-
ຍານ (ສັນຍາ) ວ່າຈະໃຫ້ແກ່ບັນພະບູລຸດຂອງເຈົ້າທັງຫລາຍ 36ເວັ້ນແຕ່ ກາເລັບ ລູກຊາຍ ເຢ-
ຟຸນເນ ລາວຈະເຫັນແຜ່ນດິນນັ້ນ ແລະເຮົາຈະໃຫ້ແຜ່ນດິນທີ່ລາວໄດ້ຢຽບນັ້ນ ແກ່ລາວ ແລະ
ແກ່ລູກຫລານ ເພາະວ່າລາວໄດ້ຕິດຕາມ ພຣະຜູ້ເປັນເຈົ້າ ຢ່າງສຸດໃຈ' 37ພຣະຜູ້ເປັນເຈົ້າ ກໍຊົງ
ພຣະພິໂລດເຮົາດ້ວຍ ເພາະວ່າທ່ານທັງຫລາຍ ບອກວ່າ 'ເຈົ້າຈະບໍ່ໄດ້ເຂົ້າໄປໃນທີ່ນັ້ນດ້ວຍຄື
ກັນ 38ແຕ່ ໂຢຊວຍ ລູກຊາຍ ນູນ ຜູ້ຢືນຢູ່ຕໍ່ໜ້າເຈົ້າ ຈະໄດ້ເຂົ້າໄປ ຈົ່ງສະໜັບສະໜູນລາວ
ເພາະວ່າລາວຈະພາພວກ ອິສຣາເອນ ໄປເອົາແຜ່ນດິນນັ້ນເປັນກຳມະສິດ 39ຫລາຍກວ່ານັ້ນອີກ
ລູກນ້ອຍຂອງເຈົ້າທັງຫລາຍທີ່ພວກເຈົ້າວ່າຈະຕົກເປັນທາດ ແລະລູກຂອງເຈົ້າໃນມື້ນີ້ຍັງບໍ່ຮູ້ຈັກ
ຜິດ ແລະຖືກ ຈະໄດ້ເຂົ້າໄປໃນແຜ່ນດິນ ເຮົາຈະໃຫ້ແຜ່ນດິນນັ້ນແກ່ພວກເຂົາ ແລະພວກເຂົາ
ຈະຖືກຳມະສິດໃນແຜ່ນດິນນັ້ນ 40ແຕ່ຝ່າຍເຈົ້າທັງຫລາຍຈົ່ງກັບເຂົ້າໄປໃນຖິ່ນກັນດານ ຕາມ
ທາງທີ່ໄປສູ່ທະເລແດງສາ'

41ໃນຄາວນັ້ນ ທ່ານທັງຫລາຍໄດ້ຕອບຂ້າພະເຈົ້າວ່າ 'ເຮົາທັງຫລາຍໄດ້ເຮັດບາບຕໍ່ ພຣະຜູ້-
ເປັນເຈົ້າ ແລ້ວ ເຮົາທັງຫລາຍຈະຂຶ້ນໄປສູ້ຮົບຕາມທີ່ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງ ເຮົາທັງ-
ຫລາຍໄດ້ສັ່ງນັ້ນ' ແລະທ່ານທັງຫລາຍໄດ້ຖືອາວຸດຕຽມຕົວໄວ້ທຸກຄົນ ໂດຍຄິດວ່າການທີ່ຈະຂຶ້ນ
ໄປຍັງພູເຂົານັ້ນເປັນເລື່ອງງ່າຍ 42ພຣະຜູ້ເປັນເຈົ້າ ສັ່ງຂ້າພະເຈົ້າວ່າ 'ຈົ່ງກ່າວແກ່ຄົນທັງຫລາຍ
ນັ້ນວ່າ ຢ່າຂຶ້ນໄປສູ້ຮົບເລີຍ ຢ້ານວ່າເຈົ້າທັງຫລາຍຈະພ່າຍແພ້ສັດຕູ ເພາະວ່າເຮົາບໍ່ໄດ້ຢູ່ທ່າມ-
ກາງພວກເຈົ້າ' 43ຂ້າພະເຈົ້າຈຶ່ງໄດ້ກ່າວແກ່ທ່ານດັ່ງນັ້ນ ແຕ່ທ່ານທັງຫລາຍບໍ່ໄດ້ເຊື່ອຟັງ ແລະ
ໄດ້ຂັດຂືນພຣະບັນຊາຂອງ ພຣະຜູ້ເປັນເຈົ້າ ໂດຍມີໃຈຈອງຫອງ ແລະໄດ້ຂຶ້ນໄປທີ່ພູເຂົານັ້ນ
44ແລະຄົນ ອະໂມຣິດ ທີ່ຢູ່ໃນພູເຂົານັ້ນ ໄດ້ອອກມາຕໍ່ສູ້ແລະໄລ່ຕີພວກທ່ານເໝືອນດັ່ງຝູງເຜິ້ງໄລ່
ແລະໄດ້ຂ້າທ່ານທັງຫລາຍໃນເມືອງ ເສອີ ຈົນຮອດ ໂຮມາ 45ແລະພວກທ່ານກັບມາຮ້ອງໄຫ້ຕໍ່ໜ້າ
ພຣະຜູ້ເປັນເຈົ້າ ແຕ່ ພຣະຜູ້ເປັນເຈົ້າ ບໍ່ໄດ້ຊົງຟັງສຽງຮ້ອງ ຫລືຫງ່ຽງພຣະກັນຟັງທ່ານທັງຫລາຍ
46ທ່ານທັງຫລາຍຈຶ່ງພັກຢູ່ທີ່ ກາເດັດ ຫລາຍມື້ຕາມທີ່ທ່ານທັງຫລາຍໄດ້ຢູ່ນັ້ນ"

# ບົດທີ 2

## ຄຳແນນຳ

1"ຄາວນັ້ນພວກ ເຮົາທັງຫລາຍ ໄດ້ກັບເຂົ້າໄປໃນຖິ່ນ ແຫ້ງແລ້ງກັນດານຕາມທາງ ໄປສູ່ທະເລ
ແດງຕາມທີ່ ພຣະຜູ້ເປັນເຈົ້າ ສັ່ງ ຂ້າພະເຈົ້າ ແລະ ເຮົາທັງຫລາຍ ໄດ້ຍ່າງວົນວຽນພູເຂົາ ເສອີ
ຫລາຍມື້ 2ແລ້ວ ພຣະຜູ້ເປັນເຈົ້າ ສັ່ງຂ້າພະເຈົ້າວ່າ 3'ເຈົ້າທັງຫລາຍໄດ້ຍ່າງວົນວຽນຢູ່ທີ່ພູເຂົານີ້
ດົນພໍແລ້ວ ຈົ່ງໄປທາງທິດເໜືອສາ 4ແລະຈົ່ງບອກຄົນທັງປວງວ່າ ເຈົ້າທັງຫລາຍໃກ້ຈະຍ່າງ
ຜ່ານເຂດແດນເມືອງພີ່ນ້ອງຂອງເຈົ້າຄືລູກຫລານຂອງ ເອຊາວ ທີ່ຢູ່ເມືອງ ເສອີ ແລ້ວ ແລະພວກ

ເຂົາຈະຢ້ານພວກເຈົ້າ ສະນັ້ນເຈົ້າທັງຫລາຍຈົ່ງລະວັງຕົວ 5ຢ່າຕໍ່ສູ້ພວກເຂົາ ເພາະວ່າເຮົາຈະບໍ່
ໃຫ້ປະເທດຂອງພວກເຂົາແກ່ເຈົ້າ ຈະບໍ່ໃຫ້ທີ່ດິນແມ່ນແຕ່ພຽງຝ່າຕີນຢຽບໄດ້ ດ້ວຍວ່າພູເຂົາເສ-
ອີນັ້ນເຮົາໄດ້ໃຫ້ເອຊາວຍຶດຄອງແລ້ວ 6ເຈົ້າທັງຫລາຍຈົ່ງເອົາເງິນຊື້ອາຫານຈາກພວກເຂົາເພື່ອ
ຈະໄດ້ກິນ ແລະຈົ່ງເອົາເງິນຊື້ນໍ້າຈາກພວກເຂົາດ້ວຍເພື່ອຈະໄດ້ດື່ມ 7ເພາະວ່າພຣະຜູ້ເປັນເຈົ້າ
ພຣະເຈົ້າຂອງພວກເຈົ້າໄດ້ອຳນວຍພຣະພອນແກ່ບັນດາກິດຈະການທີ່ມືຂອງພວກເຈົ້າໄດ້ເຮັດ
ພຣະອົງຊົງຮູ້ທາງທີ່ເຈົ້າໄດ້ຍ່າງໄປໃນຖິ່ນແຫ້ງແລ້ງກັນດານໃຫຍ່ນີ້ ພຣະຜູ້ເປັນເຈົ້າພຣະເຈົ້າ
ຂອງພວກເຈົ້າໄດ້ສະຖິດຢູ່ກັບພວກເຈົ້າສີ່ສິບປີມາແລ້ວ ພວກເຈົ້າບໍ່ໄດ້ຂັດສົນສິ່ງໃດເລີຍ'

8ແລ້ວເຮົາທັງຫລາຍໄດ້ຍ່າງກາຍໄປຈາກພີ່ນ້ອງຂອງເຮົາຄືພວກລູກຫລານຂອງເອຊາວຜູ້ທີ່ຢູ່
ເສອີໄປຈາກທາງທົ່ງພຽງເອລັດ ແລະຈາກເອັດຊີໂອນ-ເກເບ ແລະພວກເຮົາໄດ້ລ້ຽວໄປຕາມ
ທາງຖິ່ນແຫ້ງແລ້ງກັນດານໂມອາບ 9ແລະພຣະຜູ້ເປັນເຈົ້າໄດ້ບອກກັບຂ້າພະເຈົ້າວ່າ 'ເຈົ້າທັງ-
ຫລາຍຢ່າເຮັດເສິກຕໍ່ສູ້ພວກໂມອາບ ເພາະວ່າເຮົາຈະບໍ່ໃຫ້ດິນຕອນໜຶ່ງຕອນໃດຈາກປະເທດ
ຂອງພວກເຂົາແກ່ເຈົ້າ ດ້ວຍວ່າເຮົາໄດ້ໃຫ້ເມືອງເອລັດນັ້ນແກ່ລູກຫລານຂອງໂລດໄດ້ປົກຄອງ
ແລ້ວ' 10ແຕ່ກ່ອນຄົນເອມິມໄດ້ຢູ່ທີ່ນັ້ນເປັນຊົນຊາດໃຫຍ່ຫລາຍ ແລະສູງຄືຄົນອານາກ 11ຄົນ
ເຫລົ່ານີ້ໄດ້ນັບວ່າເປັນພວກຄົນຍັກ ຄືຄົນອານາກ ແຕ່ຄົນໂມອາບເອີ້ນພວກນີ້ວ່າ ເອມິມ
12ເມື່ອກ່ອນພວກໂຮຣີໄດ້ຢູ່ທີ່ເສອີດ້ວຍ ແຕ່ລູກຫລານເອຊາວໄດ້ມາຢູ່ແທນພວກເຂົາ ແລະໄດ້
ທຳລາຍພວກເຂົາໃຫ້ພົ້ນໜ້າ ແລະໄດ້ອາໄສຢູ່ໃນບ່ອນຂອງພວກເຂົາຄືພວກອິສຣາເອນໄດ້ເຮັດ
ແກ່ເມືອງທີ່ພຣະຜູ້ເປັນເຈົ້າປະທານໃຫ້ພວກເຂົາຍຶດຄອງນັ້ນ 13ຂ້າພະເຈົ້າກ່າວວ່າ 'ບັດນີ້ເຈົ້າ
ທັງຫລາຍຈົ່ງລຸກຂຶ້ນຂ້າມແມ່ນໍ້າເຊເຣັດ' ເຮົາທັງຫລາຍຈຶ່ງຂ້າມແມ່ນໍ້າເຊເຣັດ 14ແລະນັບຕັ້ງແຕ່
ເຮົາມາຈາກກາເດັດ-ບາເນອາ ຈົນໄດ້ຂ້າມແມ່ນໍ້າເຊເຣັດນັ້ນ ໄດ້ສາມສິບແປດປີຈົນໝົດຄົນ
ລຸ້ນນັ້ນ ຄືຄົນທັງຫລາຍທີ່ຈະອອກເສິກໄດ້ຕາຍໝົດຈາກທ່າມກາງຄ້າຍ ຕາມທີ່ພຣະຜູ້ເປັນເຈົ້າ
ຊົງປະຕິຍານໄວ້ກັບພວກເຂົາ 15ແລະພຣະຫັດພຣະຜູ້ເປັນເຈົ້າໄດ້ຊົງຕໍ່ສູ້ພວກເຂົາ ເພື່ອຊົງທຳ-
ລາຍພວກເຂົາຈາກທ່າມກາງຄ້າຍຈົນພວກເຂົາທັງຫລາຍຈິບຫາຍໝົດ

16ຕໍ່ມາເມື່ອຄົນທີ່ອອກເສິກໄດ້ຕາຍໄປໝົດຈາກທ່າມກາງຄົນເຫລົ່ານັ້ນແລ້ວ 17ພຣະຜູ້ເປັນ-
ເຈົ້າໄດ້ບອກແກ່ຂ້າພະເຈົ້າວ່າ 18'ມື້ນີ້ ເຈົ້າທັງຫລາຍຈະເຂົ້າໄປໃນເຂດແດນຂອງຄົນໂມອາບທີ່
ເມືອງເອລັດ 19ແລະຈົ່ງຫຍັບເຂົ້າໄປໃກ້ໜ້າພວກລູກຫລານອຳໂມນຢ່າເຮັດເສິກຕໍ່ສູ້ພວກເຂົາ
ເພາະວ່າເຮົາຈະບໍ່ໃຫ້ດິນຕອນໜຶ່ງຕອນໃດຂອງລູກຫລານຄົນອຳໂມນແກ່ເຈົ້າ ດ້ວຍວ່າເຮົາໄດ້
ໃຫ້ແກ່ລູກຫລານຂອງໂລດເປັນຜູ້ຍຶດຄອງແລ້ວ'

20ທັງບ່ອນນັ້ນກໍຖືວ່າເປັນແຜ່ນດິນຂອງພວກເຣຟາຢິມ ແຕ່ກ່ອນພວກເຣຟາຢິມໄດ້ຢູ່ໃນ
ບ່ອນນັ້ນ ແຕ່ຄົນອຳໂມນໄດ້ເອີ້ນຊື່ຂອງພວກເຂົາວ່າຊຳຊູມ 21ຄົນເຫລົ່ານັ້ນໃຫຍ່ຫລາຍ ແລະ
ສູງຄືຄົນອານາກ ແຕ່ພຣະຜູ້ເປັນເຈົ້າໄດ້ຊົງທຳລາຍພວກເຂົາໃຫ້ພົ້ນໜ້າ ແລະພວກອຳໂມນ
ໄດ້ເຂົ້າຍຶດບ່ອນຂອງພວກເຂົາແລະອາໄສຢູ່ແທນ 22ເໝືອນດັ່ງພຣະອົງໄດ້ຊົງເຮັດໃຫ້ແກ່ພວກ
ລູກຫລານເອຊາວຜູ້ທີ່ຢູ່ເສອີ ເມື່ອພຣະອົງຊົງທຳລາຍພວກໂຮຣີໃຫ້ພົ້ນໜ້າ ແລະພວກເຂົາໄດ້
ຍຶດບ່ອນຂອງພວກໂຮຣີແລ້ວອາໄສຢູ່ແທນຈົນຮອດທຸກມື້ນີ້ 23ສ່ວນຊາວອາວາທີ່ຢູ່ໃນບ້ານຈົນ

ຮອດ ຄາຊາ ຄົນ ກັບໂຕຣີ ຊຶ່ງອອກມາຈາກ ກັບໂຕເຣ ກໍໄດ້ທຳລາຍພວກເຂົາ ແລະອາໄສຢູ່
ແທນ
24'ພວກເຈົ້າຈົ່ງລຸກຂຶ້ນເດີນທາງຂ້າມແມ່ນ້ຳອາໂນນ ເບິ່ງແມ ເຮົາໄດ້ມອບ ສີໂຮນ ຊາວ ອະ-
ໂມຣິດ ຜູ້ເປັນກະສັດ ເມືອງ ເຮັດຊະໂບນ ແລະເມືອງຂອງພວກເຂົາໄວ້ໃນມືຂອງພວກເຈົ້າ ເຈົ້າ
ທັງຫລາຍຈົ່ງຕັ້ງຕົ້ນຍຶດເມືອງນັ້ນ ແລະສູ້ຮົບກັບພວກເຂົາ 25ຕັ້ງແຕ່ມື້ນີ້ໄປເຮົາຈະໃຫ້ຊົນຊາດ
ທັງຫລາຍທົ່ວໃຕ້ຟ້າຢ້ານກົວພວກເຈົ້າ ເພາະວ່າພວກເຂົາຈະໄດ້ຍິນຊື່ສຽງຂອງເຈົ້າກໍຈະຢ້ານຈົນ
ຕົວສັ່ນ ແລະມີຄວາມອຸກໃຈເພາະໄດ້ຍິນຊື່ສຽງຂອງພວກເຈົ້າ'
26ສະນັ້ນ ຂ້າພະເຈົ້າຈຶ່ງໃຊ້ຜູ້ສື່ສານຈາກຖິ່ນແຫ້ງແລ້ງກັນດານ ເກເດໂມດ ໄປເຝົ້າສີໂຮນກະ-
ສັດເມືອງ ເຮັດຊະໂບນ ເພື່ອທູນຕອບຖ້ອຍຄຳອັນສັນຕິວ່າ 27'ຂໍໃຫ້ຂ້າພະເຈົ້າຍ່າງຂ້າມແຜ່ນດິນ
ຂອງທ່ານ ຂ້າພະເຈົ້າຈະຍ່າງໄປຕາມທາງຫລວງ ຈະບໍ່ລ້ຽວໄປທາງຂວາມື ຫລືຊ້າຍມືເດັດຂາດ
28ຂໍທ່ານໄດ້ຂາຍອາຫານເອົາເງິນຂອງຂ້າພະເຈົ້າເພື່ອຂ້າພະເຈົ້າຈະໄດ້ກິນ ແລະຂໍຂາຍນ້ຳເອົາ
ເງິນຂອງຂ້າພະເຈົ້າເພື່ອຂ້າພະເຈົ້າຈະໄດ້ດື່ມ ຂໍໃຫ້ຂ້າພະເຈົ້າຍ່າງຜ່ານປະເທດຂອງທ່ານເທົ່າ
ນັ້ນ 29(ເໝືອນດັ່ງພວກລູກຫລານ ເອຊາວ ທີ່ຢູ່ ເມືອງ ເສອີ ແລະພວກ ໂມອາບ ທີ່ຢູ່ ເມືອງ ເອລັດ
ໄດ້ເຮັດແກ່ຂ້າພະເຈົ້ານັ້ນ) ຈົນຂ້າພະເຈົ້າຂ້າມແມ່ນ້ຳຢໍແດນ ເຂົ້າໄປໃນແຜ່ນດິນທີ່ ພຣະຜູ້ເປັນ-
ເຈົ້າ ພຣະເຈົ້າ ຂອງຂ້າພະເຈົ້າທັງຫລາຍໄດ້ຊົງປະທານແກ່ຂ້າພະເຈົ້າ' 30ແຕ່ສີໂຮນກະສັດເມືອງ
ເຮັດຊະໂບນ ບໍ່ຍອມໃຫ້ເຮົາທັງຫລາຍຂ້າມປະເທດຂອງເພິ່ນ ເພາະວ່າ ພຣະຜູ້ເປັນເຈົ້າ ພຣະ-
ເຈົ້າ ຂອງພວກເຮົາໄດ້ຊົງເຮັດໃຫ້ຈິດໃຈຂອງ ສີໂຮນ ແຂງກະດ້າງໄປ ເພື່ອຈະໄດ້ຊົງມອບພວກ
ເຂົາໄວ້ໃນມືຂອງພວກທ່ານ ດັ່ງເປັນຢູ່ທຸກມື້ນີ້ 31ແລະ ພຣະຜູ້ເປັນເຈົ້າ ບອກກັບຂ້າພະເຈົ້າວ່າ
'ເບິ່ງແມ ເຮົາໄດ້ມອບ ສີໂຮນ ແລະເມືອງຂອງພວກເຂົາໄວ້ກັບເຈົ້າ ຈົ່ງຕັ້ງຕົ້ນເຂົ້າຍຶດຄອງເພື່ອ
ເຈົ້າຈະໄດ້ແຜ່ນດິນຂອງພວກເຂົາມາເປັນກຳມະສິດ' 32ແລ້ວ ສີໂຮນ ກໍຍົກທັບອອກມາຕໍ່ສູ້ກັບ
ພວກເຮົາ ທັງເພິ່ນ ແລະພົນທະຫານທັງຫລາຍຂອງເພິ່ນທີ່ເມືອງ ຢາຮາດ 33ແລະ ພຣະຜູ້ເປັນ-
ເຈົ້າ ພຣະເຈົ້າ ຂອງເຮົາທັງຫລາຍໄດ້ຊົງມອບເພິ່ນໄວ້ຕໍ່ໜ້າພວກເຮົາ ແລະເຮົາໄດ້ຕີທຳລາຍເພິ່ນ
ກັບລູກຊາຍ ແລະພົນທະຫານທັງຫລາຍຂອງເພິ່ນ. 34ໃນຄາວນັ້ນ ເຮົາໄດ້ຍຶດເມືອງທັງຫລາຍ
ຂອງເພິ່ນ ແລະເຮົາໄດ້ທຳລາຍຈົນໝົດກ້ຽງຄືຜູ້ຊາຍ ຜູ້ຍິງ ແລະເດັກນ້ອຍທັງຫລາຍໃນທຸກ
ເມືອງ ບໍ່ໃຫ້ມີເຫລືອຢູ່ເລີຍແມ່ນແຕ່ຄົນດຽວ 35ແຕ່ຝູງສັດເຮົາໄດ້ຍຶດມາເປັນຂອງເຮົາ ທັງສິ່ງ
ຂອງໃນ ເມືອງ ເຫລົ່ານັ້ນທີ່ເຮົາຕີມາ 36ຕັ້ງແຕ່ ອາໂຣເອ ທີ່ຢູ່ແຄມລຸ່ມແມ່ນ້ຳ ອາໂນນ ແລະຕັ້ງແຕ່
ເມືອງທີ່ຢູ່ໃນລຸ່ມແມ່ນ້ຳນັ້ນຈົນເຖິງ ເມືອງ ກີເລອາດ ບໍ່ມີເມືອງໃດທີ່ຕໍ່ຕ້ານເຮົາໄດ້ ພຣະຜູ້ເປັນ-
ເຈົ້າ ພຣະເຈົ້າ ຂອງເຮົາໄດ້ຊົງມອບທັງໝົດໄວ້ແກ່ເຮົາ 37ແຕ່ວ່າທ່ານທັງຫລາຍບໍ່ໄດ້ຫຍັບເຂົ້າມາ
ໃກ້ແຜ່ນດິນຄົນ ອຳໂມນ ຄືຝັ່ງແມ່ນ້ຳຢັບໂບກ ແລະເມືອງທີ່ຢູ່ເທິງພູເຂົາ ແລະບ່ອນອື່ນໆ ຊຶ່ງ
ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງເຮົາສັ່ງຫ້າມເຮົານັ້ນ"

# ບົດທີ 3

## ໂມເຊທົບທວນຕໍ່ໄປເລື່ອງການເດີນທາງໃນຖິ່ນແຫ້ງແລ້ງກັນດານ

1“ພວກເຮົາທັງຫລາຍຈຶ່ງໄດ້ຫັນໄປຂຶ້ນຕາມທາງສູ່ເມືອງ ບາຊານ ແລ້ວ ໂອກ ກະສັດເມືອງ
ບາຊານ ກໍອອກມາຕໍ່ສູ້ກັບພວກເຮົາ ຕົວ ໂອກ ເອງແລະພົນທະຫານທັງໝົດຂອງເພິ່ນມາສູ້ຮົບກັບ
ພວກເຮົາທີ່ເມືອງ ເອັດເຣອີ 2ແຕ່ພຣະຜູ້ເປັນເຈົ້າບອກກັບຂ້າພະເຈົ້າວ່າ ‘ເຈົ້າຢ່າຊູຢ້ານພວກ
ເຂົາເລີຍ ເພາະວ່າເຮົາຈະມອບພວກເຂົາກັບພົນທະຫານ ທັງໝົດຂອງເຂົາແລະແຜ່ນດິນຂອງ
ເຂົາໄວ້ໃນມືຂອງເຈົ້າ ເຈົ້າຈະເຮັດແກ່ພວກເຂົາຄືກັບທີ່ເຈົ້າໄດ້ເຮັດແກ່ສີໂຮນ ກະສັດຂອງຄົນ
ອະໂມຣິດ ຊຶ່ງຢູ່ເມືອງ ເຮັດຊະໂບນ ນັ້ນ’ 3ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງເຮົາຈຶ່ງໄດ້ຊົງມອບໄວ້
ໃນມືຂອງພວກເຮົາ ທັງ ໂອກ ກະສັດເມືອງ ບາຊານ ແລະພົນທະຫານທັງຫລາຍຂອງເພິ່ນ ແລະ
ເຮົາທັງຫລາຍໄດ້ຂ້າພວກເຂົາຈົນບໍ່ມີເຫລືອຢູ່ຈັກຄົນດຽວ 4ແລະພວກເຮົາໄດ້ຕີເອົາບ້ານເມືອງ
ທັງຫລາຍຂອງພວກເຂົາຈົນບໍ່ມີເຫລືອຈັກເມືອງດຽວ ຊຶ່ງເຮົາໄດ້ຍຶດມາລວມຫົກສິບເມືອງ ດິນ-
ແດນ ອາໂກບ ທັງໝົດ ຊຶ່ງເປັນລາຊະອານາຈັກຂອງ ໂອກ ກະສັດເມືອງ ບາຊານ 5ບັນດາເມືອງ
ເຫລົ່ານີ້ເປັນເມືອງທີ່ມີກຳແພງສູງອ້ອມ ມີປະຕູ ມີດ່ານປະຕູ ແລະຍັງມີເມືອງອີກຫລາຍເມືອງທີ່
ບໍ່ມີກຳແພງ 6ພວກເຮົາໄດ້ຕີທຳລາຍຈົນໝົດ ໄດ້ທຳລາຍທຸກໆເມືອງທັງໝົດ ລວມທັງຜູ້ຊາຍຜູ້-
ຍິງ ແລະເດັກນ້ອຍທັງຫລາຍ ຄືທີ່ເຮົາໄດ້ເຮັດກັບສີໂຮນ ກະສັດເມືອງ ເຮັດຊະໂບນ ນັ້ນ 7ແຕ່ຝູງ
ສັດທັງໝົດ ແລະສິ່ງຂອງທີ່ຍຶດມາໄດ້ໃນເມືອງ ເຫລົ່ານັ້ນເຮົາໄດ້ຍຶດມາເປັນຂອງພວກເຮົາເອງ
8ໃນຄາວນັ້ນ ພວກເຮົາໄດ້ຍຶດແຜ່ນດິນຈາກມືຂອງກະສັດທັງສອງຂອງຄົນ ອະໂມຣິດ ຜູ້ຢູ່ຟາກ
ແມ່ນ້ຳ ຢໍແດນ ຟາກນີ້ຕັ້ງແຕ່ລຸ່ມແມ່ນ້ຳ ອາໂນນ ຮອດພູເຂົາ ເຮີໂມນ 9(ພູເຂົາ ເຮີໂມນ ນັ້ນຊາວ ຊີ-
ໂດນ ເອີ້ນຊື່ວ່າ ສີຣີໂອນ ແລະຊາວ ອະໂມຣິດ ເອີ້ນຊື່ວ່າ ເສນີ) 10ຄືເມືອງທັງຫລາຍໃນທົ່ງພຽງສູງ
ແລະ ກີເລອາດ ທັງໝົດ ແລະ ບາຊານ ທັງໝົດ ຈົນເຖິງ ສາເລກາ ແລະ ເອັດເຣອີ ຊຶ່ງເປັນຫົວ
ເມືອງ ແຫ່ງລາຊະອານາຈັກ ໂອກ ໃນເມືອງ ບາຊານ 11ເຫດວ່າ ໂອກ ກະສັດເມືອງ ບາຊານ ຍັງ
ເຫລືອຢູ່ແຕ່ຜູ້ດຽວ ຊຶ່ງເປັນພວກຄົນຍັກ ຕຽງນອນຂອງເພິ່ນເຮັດດ້ວຍເຫລັກ ຕຽງນອນນັ້ນບໍ່ຢູ່ທີ່
ເມືອງ ຣັບບາ ຂອງຄົນ ອຳໂມນ ບໍ່ແມ່ນບໍ ຍາວຕັ້ງ ເກົ້າສອກກວ້າງສີ່ສອກຂະໜາດສອກຂອງຄົນ
ເຮົາ

12ໃນເທື່ອນັ້ນ ເຮົາໄດ້ຍຶດຄອງແຜ່ນດິນນັ້ນຕັ້ງແຕ່ເມືອງ ອາໂຣເອ ຊຶ່ງຢູ່ແຄມລຸ່ມແມ່ນ້ຳ ອາ-
ໂນນ ແລະເຂດແດນພູເຂົາ ກີເລອາດ ເຄິ່ງໜຶ່ງ ກັບຫົວເມືອງທັງຫລາຍເຫລົ່ານັ້ນ ເຮົາໄດ້ໃຫ້ແກ່
ພວກ ຣູເບັນ ແລະຄົນ ຄາດ 13ສ່ວນ ກີເລອາດ ທີ່ຍັງ ເຫລືອຢູ່ກັບ ເມືອງ ບາຊານ ທັງໝົດ ຊຶ່ງເປັນ
ລາຊະອານາຈັກຂອງ ໂອກ ຄືດິນແດນ ອາໂກບ ທັງໝົດ ເຮົາກໍໄດ້ໃຫ້ກັບຕະກູນ ມານາເຊ ເຄິ່ງ
ເຜົ່າ ທັງໝົດເມືອງ ບາຊານ ນັ້ນເອີ້ນວ່າດິນແດນຂອງພວກ ເຣຟາອີມ 14ຢາອີ ມານາເຊ ກໍຕີໄດ້
ດິນແດນ ອາໂກບ ທັງໝົດ ຈົນເຖິງເຂດແດນເມືອງຊາວ ເກຊູ ແລະເມືອງ ມາອາກາ ແລະໄດ້
ເອີ້ນຊື່ເມືອງເຫລົ່ານັ້ນຕາມຊື່ຂອງຕົນວ່າ ບາຊານ ຮາໂວດ-ຢາອີ ຈົນເຖິງທຸກມື້ນີ້ 15ເມືອງ ກີເລ-
ອາດ ນັ້ນເຮົາໃຫ້ແກ່ ມາກີ 16ຕັ້ງແຕ່ ກີເລອາດ ຫາລຸ່ມແມ່ນ້ຳ ອາໂນນ ຖືເອົາກາງລຸ່ມແມ່ນ້ຳເປັນ
ເຂດແດນມາເຖິງແມ່ນ້ຳຢັບໂບກ ອັນເປັນເຂດແດນຂອງພວກລູກຫລານ ອຳໂມນ ເຮົາປະທານໃຫ້

ແກ່ຄົນຣູເບັນ ແລະຄົນຄາດ [17]ພ້ອມທັງແຖບທົ່ງພຽງດ້ວຍ ມີແມ່ນ້ຳຢໍແດນ ເປັນເຂດແດນ ຕັ້ງ-
ແຕ່ທະເລ ກິນເນເຣດ (ຄາລີເລ ທາງຕອນເໜືອ) ຈົນເຖິງທະເລ ແຫ່ງທົ່ງພຽງ ຄືທະເລເຄັມ
(ທະເລຕາຍທາງຕອນໃຕ້) ທີ່ປີຊະກາ ຊຶ່ງຢູ່ທິດຕາເວັນອອກ
[18]ໃນຄາວນັ້ນຂ້າພະເຈົ້າໄດ້ສັ່ງທ່ານທັງຫລາຍວ່າ 'ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງທ່ານໄດ້
ຊົງໃຫ້ທ່ານທັງຫລາຍຍຶດຄອງແຜ່ນດິນນີ້ ທະຫານທັງໝົດຂອງທ່ານ ຈົ່ງຖືອາວຸດຍົກທັບຂ້າມ
ໄປກ່ອນພວກລູກຫລານ ອິສຣາເອນ ຜູ້ເປັນພີ່ນ້ອງຂອງທ່ານ [19]ແຕ່ວ່າລູກເມຍ ທັງຫລາຍຂອງ
ທ່ານກັບຝູງສັດຂອງທ່ານ (ເພາະວ່າຂ້າພະເຈົ້າຮູ້ຢູ່ແລ້ວວ່າ ທ່ານທັງຫລາຍມີຝູງສັດເປັນຈຳ-
ນວນຫລາຍ) ຈົ່ງຢູ່ໃນເຂດເມືອງທີ່ເຮົາຍົກໃຫ້ນັ້ນກ່ອນ [20]ຈົນກວ່າພຣະຜູ້ເປັນເຈົ້າຈະໂຜດໃຫ້
ພີ່ນ້ອງຂອງທ່ານ ໄດ້ຢຸດພັກຄືໄດ້ປະທານ ແກ່ທ່ານ ແລ້ວ ຈົນພວກເຂົາທັງຫລາຍຈະຍຶດຄອງ
ແຜ່ນດິນ ຊຶ່ງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງ ທ່ານ ປະທານ ແກ່ ພວກ ເຂົາ ທີ່ ຟາກ ແມ່ນ້ຳ ຢໍແດນ
ເບື້ອງນັ້ນແລ້ວ ທ່ານທັງຫລາຍຈຶ່ງຈະກັບມາຍັງບ່ອນຢູ່ຂອງຕົນ ຊຶ່ງຂ້າພະເຈົ້າໄດ້ໃຫ້ແກ່ທ່ານ
ທັງຫລາຍ' [21]ໃນຄາວນັ້ນຂ້າພະເຈົ້າໄດ້ສັ່ງ ໂຢຊວຍ ວ່າ 'ໃນຕາຂອງທ່ານໄດ້ເຫັນບັນດາກິດຈະ-
ການຊຶ່ງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງທ່ານໄດ້ຊົງ ເຮັດ ແກ່ກະສັດທັງສອງນັ້ນແລ້ວ ດັ່ງນັ້ນ
ພຣະຜູ້ເປັນເຈົ້າ ຈະຊົງ ເຮັດ ແກ່ອານາຈັກທັງປວງທີ່ເຈົ້າຈະເຂົ້າໄປ [22]ທ່ານທັງຫລາຍຢ່າໄດ້ຢ້ານ
ພວກເຂົາເລີຍ ເພາະວ່າພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານ ພຣະອົງນັ້ນຊົງສູ້ຮົບເພື່ອທ່ານ'
[23]ໃນ ເທື່ອ ນັ້ນ ຂ້າພະເຈົ້າ ໄດ້ ອ້ອນວອນ ພຣະຜູ້ເປັນເຈົ້າ ວ່າ [24]'ຂ້າ ແດ່ ອົງ ພຣະຜູ້ເປັນເຈົ້າ
ພຣະເຈົ້າ ພຣະອົງໄດ້ຕັ້ງຕົ້ນໃຫ້ຂ້າໃຊ້ຂອງພຣະອົງເຫັນອານຸພາບ ແລະພຣະຫັດອັນມີລິດເດດ
ຂອງພຣະອົງ ເຫດວ່າມີພະໃດໆແດ່ໃນຟ້າສະຫວັນ ຫລືໃນແຜ່ນດິນໂລກ ຊຶ່ງສາມາດເຮັດການ
ສຳຄັນ ແລະການອິດທິລິດດັ່ງພຣະອົງໄດ້ [25]ຂໍພຣະອົງຊົງໂຜດອະນຸຍາດໃຫ້ຂ້າພະອົງຂ້າມໄປ
ເບິ່ງແຜ່ນດິນອັນດີທີ່ຢູ່ຟາກແມ່ນ້ຳຢໍແດນ ເບື້ອງນັ້ນ ຄືເຂດແດນພູເຂົາງົດງາມ ແລະພູເລບາ-
ນອນ' [26]ແຕ່ ພຣະຜູ້ເປັນເຈົ້າ ໄດ້ພຣະພິໂລດຕໍ່ຂ້າພະເຈົ້າ ເພາະວ່າທ່ານທັງຫລາຍ ເປັນຕົ້ນ ເຫດ
ພຣະອົງຈຶ່ງບໍ່ໄດ້ຊົງ ໂຜດຟັງຂ້າພະເຈົ້າ ແລະ ພຣະຜູ້ເປັນເຈົ້າບອກກັບຂ້າພະເຈົ້າວ່າ 'ພໍແລ້ວ
ເຈົ້າຢ່າໄດ້ເວົ້າກັບເຮົາດ້ວຍເລື່ອງນີ້ຕໍ່ໄປອີກ [27]ເຈົ້າຈົ່ງຂຶ້ນໄປເຖິງຈອມພູປີຊະກາ ແລະເບິ່ງ
ດ້ວຍຕາຂອງເຈົ້າ ເບິ່ງທິດຕາເວັນຕົກ ທິດເໜືອ ທິດໃຕ້ ແລະທິດຕາເວັນອອກ ແລະເບິ່ງ
ແຜ່ນດິນນັ້ນດ້ວຍຕາຂອງເຈົ້າ ເພາະວ່າເຈົ້າຈະຂ້າມແມ່ນ້ຳຢໍແດນນີ້ໄປບໍ່ໄດ້ເດັດຂາດ [28]ແຕ່ວ່າ
ເຈົ້າຈົ່ງສັ່ງ ໂຢຊວຍ ຈົ່ງຊູກຳລັງ ແລະຊູໃຈຂອງລາວໃຫ້ເຂັ້ມແຂງ ເພາະວ່າລາວຈະຕ້ອງນຳໜ້າ
ຊົນຊາດນີ້ຂ້າມໄປ ແລະຈະໃຫ້ພວກເຂົາທັງຫລາຍເຂົ້າຖືກຳມະສິດໃນແຜ່ນດິນທີ່ເຈົ້າຫລຽວເຫັນ
ນັ້ນ' [29]ສະນັ້ນ ເຮົາທັງຫລາຍຈຶ່ງຢຸດຢູ່ໃນຮ່ອມພູຕໍ່ໜ້າ ເບັດ-ເປໂອ

# ບົດທີ 4

## ອິສຣາເອນຍຶດແຜ່ນດິນຂອງໂອກກະສັດເມືອງບາຊານ

[1]ໂມເຊ ໄດ້ກ່າວຕໍ່ປະຊາຊົນວ່າ, "ພຣະທຳທັງໝົດທີ່ຂ້າພະເຈົ້າບອກສອນນັ້ນ ພວກທ່ານຈົ່ງ
ປະຕິບັດຕາມເພື່ອວ່າຈະໄດ້ມີຊີວິດຢູ່ ແລະເພື່ອຈະໄດ້ເຂົ້າຍຶດຄອງ ເອົາແຜ່ນດິນທີ່ ພຣະຜູ້ເປັນ-

ເຈົ້າ ຂອງບັນພະບູລຸດຂອງພວກທ່ານກຳລັງຈະປະທານໃຫ້. 2ຢ່າເພີ່ມເຕີມ ຫລືຕັດຖ້ອຍຄຳ
ໃດໆ ທີ່ຂ້າພະເຈົ້າສັ່ງນັ້ນອອກ ໃຫ້ເຊື່ອຟັງທັງໝົດ ເພາະວ່າເປັນຄຳສັ່ງແຫ່ງພຣະຜູ້ເປັນເຈົ້າ
ຂອງພວກທ່ານ. 3ພວກທ່ານເອງກໍເຫັນແລ້ວສິ່ງທີ່ພຣະຜູ້ເປັນເຈົ້າໄດ້ຊົງກະທຳໃນພູເປໂອນັ້ນ
ຄືຊົງທຳລາຍທຸກຄົນທີ່ຂາບໄຫວ້ພະບາອານ. 4ແຕ່ຄົນທັງຫລາຍທີ່ຍຶດຖືພຣະຜູ້ເປັນເຈົ້າຂອງ
ພວກເຈົ້າກໍຍັງມີຊີວິດຢູ່ທຸກວັນນີ້. 5-6ຂ້າພະເຈົ້າໄດ້ສອນພຣະທຳທັງໝົດນີ້ແກ່ພວກເຈົ້າ ເໝືອນ
ດັ່ງພຣະຜູ້ເປັນເຈົ້າຂອງຂ້າພະເຈົ້າໄດ້ບອກສອນຂ້າພະເຈົ້າ ສະນັ້ນຢູ່ໃນດິນແດນທີ່ພວກເຈົ້າ
ກຳລັງຈະບຸກເຂົ້າໄປຍຶດຄອງນັ້ນ ຈົ່ງປະຕິບັດຕາມພຣະຄຳເຫລົ່ານີ້ດ້ວຍຄວາມສັດຊື່ ເພາະວ່າ
ການເຮັດເຊັ່ນນີ້ຈະເປັນເຄື່ອງສະແດງໃຫ້ຊົນຊາດອື່ນໆ ເຫັນເຖິງສະຕິປັນຍາແລະຄວາມຮອບຮູ້
ຂອງພວກທ່ານ ເມື່ອຊົນຊາດເຫລົ່ານັ້ນໄດ້ຟັງພຣະທຳນີ້ທັງໝົດ ພວກເຂົາກໍຈະພາກັນເວົ້າວ່າ
ຊົນຊາດໃຫຍ່ນີ້ມີສະຕິປັນຍາ ແລະຄວາມຮອບຮູ້ແທ້. 7ບໍ່ມີຊົນຊາດໃຫຍ່ອື່ນໃດມີພະຢູ່ໃກ້ເໝືອນ
ກັບພວກເຮົາມີພຣະຜູ້ເປັນເຈົ້າຢູ່ໃກ້ ຄືເມື່ອໃດພວກເຮົາຮ້ອງຂໍໃຫ້ຊົງຊ່ອຍເຫລືອ ພຣະອົງກໍຊົງ
ຕອບ. 8ບໍ່ມີປະເທດໃຫຍ່ອື່ນໃດທີ່ມີພຣະທຳທີ່ຍຸດຕິທຳຄືດັ່ງທີ່ຂ້າພະເຈົ້າໄດ້ສອນພວກທ່ານມື້ນີ້.
9ຈົ່ງເຝົ້າລະວັງຢູ່ ແລະລະມັດລະວັງໃຫ້ດີຕະຫລອດຊົ່ວຊີວິດຂອງພວກທ່ານນັ້ນ ຢ່າໄດ້ຫລົງ
ລືມສິ່ງທີ່ພວກທ່ານໄດ້ເຫັນກັບຕາມາແລ້ວ ຈົ່ງບອກໃຫ້ພວກລູກຫລານຂອງພວກທ່ານຮູ້. 10ເຖິງ
ເລື່ອງເຫດການໃນມື້ທີ່ພວກເຈົ້າໄດ້ເຂົ້າເຝົ້າພຣະຜູ້ເປັນເຈົ້າຂອງເຈົ້າທີ່ພູຊີນາຍ ໃນມື້ນັ້ນ
ພຣະອົງຊົງບອກຂ້າພະເຈົ້າວ່າ, “ຈົ່ງບອກໃຫ້ປະຊາຊົນມາໂຮມກັນ ເພາະວ່າເຮົາຢາກເວົ້າໃຫ້
ພວກເຂົາຟັງ ເພື່ອພວກເຂົາທັງຫລາຍ ຈະໄດ້ຮູ້ຈັກການເຄົາລົບຢຳເກງເຮົາຈົນຕະຫລອດຊີວິດ
ແລະເພື່ອຈະໄດ້ບອກສອນລູກຫລານຂອງພວກເຂົາໃຫ້ຢຳເກງເຮົາ.” 11ໃນມື້ນັ້ນເອງ ພວກເຈົ້າ
ໄດ້ຫຍັບເຂົ້າມາຢືນຢູ່ໃນຕີນພູ ຊຶ່ງມີເມກເປັນຄວັນໜາຕຶບປົກຄຸມຢູ່ ແລະມີໄຟລຸກພຸ່ງຂຶ້ນສູງເຖິງ
ທ້ອງຟ້າ. 12ແລະພຣະຜູ້ເປັນເຈົ້າໄດ້ໃຫ້ພວກທ່ານຮູ້ວ່າ ພຣະອົງໄດ້ຊົງເວົ້າແນວໃດແດ່ກັບ
ພວກທ່ານອອກມາຈາກໄຟນັ້ນ ທັງໆ ທີ່ພວກທ່ານບໍ່ເຫັນຮູບຮ່າງໃດໆຂອງພຣະອົງເລີຍ.
13ພຣະອົງຊົງບອກໃຫ້ທ່ານທັງຫລາຍເຮັດຕາມຄຳໝັ້ນສັນຍາທີ່ຊົງໃຫ້ໄວ້ ແລະຊົງໃຫ້ເຊື່ອຟັງ
ພຣະບັນຍັດສິບປະການ ທີ່ຊົງຈາລຶກໄວ້ໃນຫີນສອງແຜ່ນ. 14ພຣະຜູ້ເປັນເຈົ້າຊົງບອກໃຫ້ຂ້າ-
ພະເຈົ້າ ສອນພຣະທຳທັງໝົດນີ້ແກ່ພວກທ່ານ ເພື່ອຈະໄດ້ນຳໄປປະພຶດປະຕິບັດຢູ່ໃນແຜ່ນດິນທີ່
ກຳລັງຈະເຂົ້າຍຶດຄອງນັ້ນ.

## ໂມເຊຕັກເຕືອນຊາວອິສຣາເອນໃຫ້ເຊື່ອຟັງ

15ເມື່ອພຣະຜູ້ເປັນເຈົ້າຊົງກ່າວຕໍ່ພວກທ່ານອອກມາຈາກໄຟຢູ່ເທິງພູຊີນາຍນັ້ນ ພວກທ່ານບໍ່
ໄດ້ເຫັນຮູບຮ່າງໃດໆ ມັນຈຶ່ງເປັນການດີສຳລັບພວກທ່ານ. 16ສະນັ້ນ ຈົ່ງລະວັງໃຫ້ດີ ຢ່າໄດ້
ເຮັດບາບດ້ວຍການສ້າງຮູບເຄົາລົບໃດໆ ຂຶ້ນມາເລີຍ. 17-19ບໍ່ວ່າຮູບຜູ້ຊາຍ ຫລືຜູ້ຍິງ ບໍ່ວ່າຮູບ
ສັດເດຍລະສານ ຮູບນົກ ຮູບສັດເລືອຄານ ຫລືຮູບປາກໍດີ ຢ່າຫລົງຂາບໄຫວ້ຫລືບົວລະບັດສິ່ງ
ທີ່ເຫັນໃນທ້ອງຟ້າ ຄືຕາເວັນ ເດືອນແລະດວງດາວທັງຫລາຍ ສິ່ງເຫລົ່ານີ້ພຣະຜູ້ເປັນເຈົ້າຂອງ
ພວກເຮົາຊົງປະທານໃຫ້ຊົນຊາດອື່ນທັງໝົດຂາບໄຫວ້. 20ແຕ່ທ່ານບໍ່ຕ້ອງຂາບໄຫວ້ ເພາະວ່າ
ພວກທ່ານເປັນປະຊາຊົນທີ່ພຣະອົງຊົງນຳອອກມາຈາກເຕົາໄຟໃນປະເທດເອຢິບ ເພື່ອໃຫ້ເປັນ

ໄພ່ພົນຂອງພຣະອົງ ຢ່າງທີ່ພວກທ່ານກຳລັງເປັນຢູ່ທຸກມື້ນີ້. 21ຍ້ອນພວກທ່ານນັ້ນແຫລະ ພຣະ-
ຜູ້ເປັນເຈົ້າ ຂອງພວກເຮົາ ຈຶ່ງຊົງພຣະພິໂລດຂ້າພະເຈົ້າ ຄືພຣະອົງຊົງປະກາດຢ່າງໜັກແໜ້ນ
ວ່າຈະບໍ່ໃຫ້ຂ້າພະເຈົ້າຂ້າມແມ່ນໍ້າຢໍແດນ ໄປຍັງແຜ່ນດິນອັນອຸດົມສົມບູນ ຊຶ່ງພຣະອົງຈະຊົງປະ-
ທານໃຫ້ແກ່ພວກທ່ານນັ້ນ. 22ຂ້າພະເຈົ້າຈະຕ້ອງຕາຍຢູ່ໃນແຜ່ນດິນນີ້ ຈະບໍ່ໄດ້ຂ້າມແມ່ນໍ້າຢໍ-
ແດນ ໄປ ແຕ່ພວກທ່ານນັ້ນຈະໄດ້ຂ້າມໄປຢຶດເອົາແຜ່ນດິນ ອັນອຸດົມສົມບູນນັ້ນເປັນກຳມະສິດ.
23ຈົ່ງລະວັງໃຫ້ດີ ຢ່າໄດ້ລືມຄຳໝັ້ນສັນຍາທີ່ ພຣະຜູ້ເປັນເຈົ້າ ຂອງພວກທ່ານໄດ້ຊົງໃຫ້ໄວ້ ໃຫ້
ເຊື່ອຟັງຄຳສັ່ງຂອງພຣະອົງ ຊົງສັ່ງຫ້າມບໍ່ໃຫ້ເຮັດຮູບເຄົາລົບໃດໆ ຂາບໄຫວ້. 24ເພາະວ່າ
ພຣະຜູ້ເປັນເຈົ້າ ຂອງທ່ານທັງຫລາຍ ເປັນ ພຣະເຈົ້າ ຜູ້ຊົງຫວງ ແຫນພວກທ່ານ ແລະຊົງ ເປັນ
ເໝືອນໄຟທີ່ລຸກໄໝ້ເຜົາຜານ.

25ເມື່ອພວກທ່ານມີລູກຫລານ ແລະໄດ້ເຂົ້າໄປຢູ່ໃນແຜ່ນດິນນັ້ນເຫິງນານແລ້ວ ຢ່າໄດ້ເຮັດ
ບາບດ້ວຍການສ້າງຮູບເຄົາລົບໃດໆ ຂຶ້ນມາເລີຍ ເພາະໃນສາຍພຣະເນດຂອງ ພຣະຜູ້ເປັນເຈົ້າ
ນັ້ນ ຊົງຖືວ່າການກະທຳຢ່າງນີ້ຊົ່ວຮ້າຍຫລາຍ ແລະເປັນການກະທຳທີ່ພຣະອົງຊົງພຣະພິໂລດ.
26ຖ້າພວກທ່ານເຮັດຢ່າງນີ້ ຂ້າພະເຈົ້າຈະເຊີນເອົາຟ້າດິນມາເປັນພະຍານກ່າວໂທດທ່ານໃນມື້ນີ້
ວ່າພວກທ່ານຈະຈິບຫາຍຈາກແຜ່ນດິນນີ້ໃນບໍ່ຊ້າ ຈະບໍ່ໄດ້ຢູ່ເຫິງນານໃນແຜ່ນດິນທີ່ທ່ານກຳລັງ
ຈະຂ້າມແມ່ນໍ້າຢໍແດນ ໄປຢຶດຄອງນັ້ນ ແຕ່ຈະຖືກທຳລາຍຈົນໝົດສິ້ນ. 27ພຣະຜູ້ເປັນເຈົ້າ ຈະ
ເຮັດໃຫ້ພວກທ່ານແຕກກະຈັດກະຈາຍໄປຢູ່ໃນປະເທດຕ່າງໆ ແລ້ວຈະໃຫ້ເຫລືອຢູ່ທີ່ນັ້ນພຽງແຕ່
ຈຳນວນໜ້ອຍດຽວ. 28ພວກທ່ານຈະຮັບໃຊ້ພະໄມ້ ແລະພະຫີນທີ່ມະນຸດເຮັດຂຶ້ນ ພະເຫລົ່ານີ້
ເບິ່ງ ຟັງ ກິນ ແລະດົມກິ່ນບໍ່ໄດ້. 29ຖ້າວ່າຢູ່ທີ່ນັ້ນພວກທ່ານສະແຫວງຫາ ພຣະຜູ້ເປັນເຈົ້າ ຂອງ
ພວກທ່ານດ້ວຍຄວາມເຕັມໃຈ ພວກທ່ານກໍຈະພົບພຣະອົງ. 30ແຕ່ເມື່ອໃດຫາກພວກທ່ານມີ
ຄວາມລຳບາກໃຈໃນພາຍໜ້າ ຍ້ອນສິ່ງເຫລົ່ານີ້ທັງໝົດໄດ້ມາຖືກທ່ານ ພວກທ່ານກໍຈະກັບຄືນ
ມາຫາ ພຣະຜູ້ເປັນເຈົ້າ ແລະເຊື່ອຟັງພຣະອົງ. 31ເພາະວ່າ ພຣະອົງຊົງເປັນ ພຣະເຈົ້າ ທີ່ເຕັມໄປ
ດ້ວຍພຣະເມດຕາ ຈະບໍ່ຊົງປະຖິ້ມ ຫລືທຳລາຍພວກທ່ານ ແລະຈະບໍ່ຊົງຫລົງລືມຄຳໝັ້ນສັນຍາ
ທີ່ພຣະອົງຊົງໃຫ້ໄວ້ກັບບັນພະບູລຸດຂອງພວກທ່ານ.

32ໃຫ້ຖາມທົ່ວໂລກນີ້ເບິ່ງດູວ່າ ໃນອະດີດຕະການກ່ອນພວກທ່ານເກີດ ຕັ້ງແຕ່ຄາວ ພຣະເຈົ້າ
ຊົງສ້າງມະນຸດໃນໂລກ ເຄີຍມີເລື່ອງໃຫຍ່ໂຕເໝືອນຢ່າງນີ້ເກີດຂຶ້ນມາແລ້ວຫລືບໍ? ມີໃຜເຄີຍໄດ້
ຍິນເລື່ອງຢ່າງນີ້ຫລືບໍ? 33ມີຊົນຊາດໃດແດ່ ເມື່ອໄດ້ຍິນ ພຣະເຈົ້າ ເວົ້າອອກມາຈາກໄຟແລ້ວກໍ
ຍັງບໍ່ຕາຍເໝືອນຢ່າງພວກທ່ານ? 34ມີພະໃດອີກ ທີ່ກ້າໄປເອົາຄົນອອກມາຈາກຊາດໜຶ່ງມາຕັ້ງ
ເປັນຊາດຂອງພະເອງ ເໝືອນຢ່າງ ພຣະຜູ້ເປັນເຈົ້າ ຂອງພວກທ່ານໄດ້ເຮັດເພື່ອທ່ານໃນປະເທດ
ເອຢິບ ນັ້ນ? ພຣະອົງໄດ້ຊົງໃຊ້ອຳນາດ ແລະອຳນາດອັນຍິ່ງໃຫຍ່ຂອງພຣະອົງເຮັດໃຫ້ເກີດມີ
ໂລກແລະສົງຄາມ ເຮັດການອັດສະຈັນ ແລະໝາຍສຳຄັນຕ່າງໆ ພ້ອມທັງເຮັດສິ່ງອັນໜ້າຢ້ານ
ໃຫ້ພວກທ່ານເຫັນຕໍ່ໜ້າຕໍ່ຕາ. 35ພຣະຜູ້ເປັນເຈົ້າ ຊົງສຳແດງສິ່ງເຫລົ່ານີ້ໃຫ້ພວກທ່ານເຫັນ ກໍ
ເພື່ອໃຫ້ພວກທ່ານຮູ້ວ່າ ພຣະອົງໆດຽວເທົ່ານັ້ນທີ່ຊົງເປັນ ພຣະເຈົ້າ ບໍ່ມີອົງອື່ນອີກ. 36ທີ່ຊົງໂຜດ
ໃຫ້ພວກທ່ານໄດ້ຍິນສຽງຂອງພຣະອົງຈາກສະຫວັນໄດ້ ກໍເພື່ອສັ່ງສອນທ່ານ ແລະຍັງຊົງໂຜດ

ໃຫ້ພວກທ່ານໄດ້ເຫັນໄຟອັນສັກສິດຂອງພຣະອົງຢູ່ໃນໂລກ ພ້ອມທັງຊົງກ່າວອອກມາຈາກໄຟ
ນັ້ນ. 37ເພາະວ່າພຣະອົງຊົງຮັກບັນພະບູລຸດຂອງພວກທ່ານ ຊົງເລືອກເອົາເຊື້ອສາຍຂອງພວກ
ເຂົາທັງຫລາຍ ແລະຊົງນຳພາພວກທ່ານອອກຈາກປະເທດ ເອຢິບ ດ້ວຍລິດທານຸພາບອັນຍິ່ງ
ໃຫຍ່ຂອງພຣະອົງເອງ. 38ໃນເວລາທີ່ພວກທ່ານຍ່າງກ້າວໄປຂ້າງໜ້ານັ້ນ ພຣະອົງໄດ້ຊົງຂັບໄລ່
ຊົນຊາດໃຫຍ່ ແລະມີກຳລັງເໜືອກວ່າພວກທ່ານອອກໜີໄປ ເພື່ອນຳທ່ານເຂົ້າມາຢູ່ໃນແຜ່ນດິນ
ນັ້ນ ຊຶ່ງຍັງເປັນຂອງພວກທ່ານຢູ່ຈົນເທົ່າທຸກມື້ນີ້. 39ດັ່ງນີ້ແຫລະ ໃຫ້ຈື່ໄວ້ ແລະຢ່າລືມວ່າ
ພຣະຜູ້ເປັນເຈົ້າ ແມ່ນ ພຣະເຈົ້າ ເທິງສະຫວັນຊັ້ນຟ້າ ແລະເທິງແຜ່ນດິນ ບໍ່ມີພະອື່ນອີກນອກຈາກ
ພຣະອົງ. 40ຈົ່ງເຮັດຕາມພຣະທຳ ແລະກົດບັນຍັດທັງໝົດຂອງພຣະອົງ ຊຶ່ງຂ້າພະເຈົ້າໄດ້ບອກ
ພວກທ່ານແລ້ວໃນມື້ນີ້ ເພື່ອທຸກສິ່ງທຸກຢ່າງຈະເປັນໄປໂດຍດີສຳລັບພວກທ່ານ ແລະລູກຫລານ
ຂອງທ່ານ ຊົງປະທານໃຫ້ເປັນເຈົ້າຂອງຕະຫລອດໄປເປັນນິດ.”

41ແລ້ວ ໂມເຊ ໄດ້ຕັ້ງຫົວເມືອງສາມຫົວເມືອງໄວ້ຢູ່ຕ່າງຫາກທີ່ ແມ່ນ້ຳຢໍແດນ ຟາກນີ້ ທາງ
ທິດຕາເວັນອອກ 42ເພື່ອຜູ້ໃດທີ່ຂ້າຄົນຈະໄດ້ຫລົບໜີໄປຢູ່ບ່ອນນັ້ນ ຄືຜູ້ທີ່ຂ້າເພື່ອນບ້ານໂດຍບໍ່
ໄດ້ເຈດຕະນາ ໂດຍບໍ່ໄດ້ກຽດຊັງລາວມາກ່ອນ ແລະເມື່ອໜີໄປຢູ່ໃນເມືອງນີ້ບ່ອນໃດບ່ອນໜຶ່ງກໍ
ຈະລອດຊີວິດ 43ຫົວເມືອງເຫລົ່ານີ້ຄືເມືອງ ເບເຊຢູ່ໃນຖິ່ນແຫ້ງແລ້ງກັນດານທີ່ທົ່ງພຽງສູງສຳລັບ
ຄົນ ຣູເບັນ ແລະ ເມືອງ ຣາໂມດ ທີ່ ກີເລອາດ ສຳລັບຄົນ ຄາດ ແລະ ເມືອງ ໂກລານ ໃນ ບາຊານ
ສຳລັບ ມານາເຊ

44ຕໍ່ໄປນີ້ເປັນພຣະບັນຍັດທີ່ໂມເຊໄດ້ຕັ້ງໄວ້ຕໍ່ໜ້າພວກລູກຫລານ ອິສຣາເອນ 45ພຣະບັນຍັດ
ເຫລົ່ານີ້ເປັນພຣະໂອວາດ ເປັນກົດເກນແລະກົດໝາຍຊຶ່ງ ໂມເຊກ່າວແກ່ພວກລູກຫລານ ອິສຣາ-
ເອນ ເມື່ອພວກເຂົາອອກຈາກ ເອຢິບ ແລ້ວ 46ເມື່ອຢູ່ຟາກແມ່ນ້ຳຢໍແດນ ຟາກນີ້ທີ່ຮ່ອມພູກົງກັນ-
ຂ້າມກັບ ເບັດ-ເປໂອ ໃນແຜ່ນດິນຂອງ ສີໂຮນກະສັດຄົນ ອະໂມຣິດຜູ້ທີ່ຢູ່ ເຮັດຊະໂບນຊຶ່ງ ໂມເຊ
ແລະພວກລູກຫລານ ອິສຣາເອນໄດ້ຕີພ່າຍແພ້ໄປເມື່ອອອກມາຈາກ ເອຢິບ ແລ້ວ 47ຄົນ ອິສຣາ-
ເອນໄດ້ເຂົ້າຍຶດແຜ່ນດິນຂອງເພິ່ນ ແລະ ແຜ່ນດິນຂອງ ໂອກ ກະສັດ ເມືອງ ບາຊານ ເປັນກະສັດ
ສອງອົງຂອງຄົນ ອະໂມຣິດ ຜູ້ທີ່ຢູ່ທາງຕາເວັນອອກຟາກແມ່ນ້ຳຢໍແດນ ຟາກນີ້ 48ຕັ້ງແຕ່ເມືອງ
ອາໂຣເອທີ່ຢູ່ແຄມແມ່ນ້ຳອາໂນນ ໄປຈົນເຖິງພູເຂົາສີໂອນ ຄື ເຮີໂມນ 49ລວມກັບທົ່ງພຽງທັງ
ໝົດ ຊຶ່ງຢູ່ຟາກຕາເວັນອອກຂອງແມ່ນ້ຳຢໍແດນຟາກນີ້ ຈົນເຖິງທະເລແຫ່ງທົ່ງພຽງທີ່ນ້ຳພຸພູປີ-
ຊະກາ

# ບົດທີ 5

## ຕັກເຕືອນບໍ່ໃຫ້ຂາບໄຫວ້ຮູບເຄົາລົບ

1ໂມເຊ ໄດ້ ເອີ້ນບັນດາພວກ ອິສຣາເອນ ທັງໝົດ ເຂົ້າມາ ແລ້ວກ່າວ ແກ່ພວກ ເຂົາທັງຫລາຍວ່າ
“ໂອ ພວກອິສຣາເອນທັງຫລາຍ ຈົ່ງຟັງກົດເກນ ແລະກົດໝາຍ ຊຶ່ງຂ້າພະເຈົ້າກ່າວໃຫ້ທ່ານ
ທັງຫລາຍຟັງໃນມື້ນີ້ ເພື່ອທ່ານທັງຫລາຍຈະໄດ້ຮຽນຮູ້ ຮັກສາໄວ້ ແລະປະຕິບັດຕາມ 2ພຣະຜູ້-
ເປັນເຈົ້າ ພຣະເຈົ້າ ຂອງ ເຮົາຊົງ ເຮັດພັນທະສັນຍາກັບ ເຮົາທັງຫລາຍທີ່ ໂຮເຣັບ 3ບໍ່ແມ່ນ ພຣະຜູ້-

ເປັນເຈົ້າ ຈະຊົງເຮັດພັນທະສັນຍານີ້ກັບບັນພະບູລຸດຂອງເຮົາທັງຫລາຍ ແຕ່ຊົງເຮັດກັບເຮົາ ຄື
ເຮົາທັງຫລາຍຜູ້ທີ່ມີຊີວິດຢູ່ບ່ອນນີ້ໃນມື້ນີ້ [4]ພຣະຜູ້ເປັນເຈົ້າບອກກັບພວກທ່ານທັງຫລາຍເທິງພູ-
ເຂົານັ້ນຈາກທ່າມກາງໄຟໜ້າຕໍ່ໜ້າ [5](ໃນຄາວນັ້ນຂ້າພະເຈົ້າຢືນຢູ່ລະຫວ່າງ ພຣະຜູ້ເປັນເຈົ້າກັບ
ທ່ານທັງຫລາຍ ເພື່ອຈະປະກາດພຣະຄຳຂອງ ພຣະຜູ້ເປັນເຈົ້າ ແກ່ທ່ານທັງຫລາຍ ເພາະວ່າທ່ານ
ທັງຫລາຍຢ້ານໄຟ ຈຶ່ງບໍ່ໄດ້ຂຶ້ນໄປເທິງພູເຂົາ) ພຣະອົງບອກວ່າ

[6]'ເຮົາແມ່ນ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງເຈົ້າ ຜູ້ໄດ້ນຳເຈົ້າອອກຈາກແຜ່ນດິນ ເອຢິບ ອອກ
ຈາກແຜ່ນດິນທີ່ເຈົ້າເປັນທາດ

## ພັນທະສັນຍາທີ່ໂຮເຣັບ

[7]ຢ່າມີພຣະເຈົ້າອື່ນໃດນອກເໜືອຈາກເຮົາ [8]ຢ່າເຮັດຮູບເຄົາລົບສຳລັບຕົນເປັນຮູບສິ່ງໜຶ່ງສິ່ງ
ໃດ ຊຶ່ງມີຢູ່ໃນຟ້າເບື້ອງເທິງ ຫລືມີຢູ່ທີ່ແຜ່ນດິນເບື້ອງລຸ່ມ ຫລືມີຢູ່ໃນນ້ຳໃຕ້ແຜ່ນດິນ [9]ຢ່າຂາບ
ໄຫວ້ ຫລືບົວລະບັດຮູບເຫລົ່ານັ້ນ ດ້ວຍວ່າເຮົາແມ່ນ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງເຈົ້າ ເປັນ
ພຣະເຈົ້າທີ່ຫວງແຫນໃຫ້ໂທດ ເພາະວ່າຄວາມຊົ່ວຊ້າຂອງພໍ່ຕົກທອດໄປເຖິງລູກຫລານຂອງຜູ້ທີ່
ກຽດຊັງເຮົາຈົນເຖິງສາມຊົ່ວສີ່ຊົ່ວອາຍຸຄົນ [10]ແຕ່ສະແດງຄວາມຮັກໝັ້ນຄົງຕໍ່ຄົນທີ່ຮັກເຮົາ ແລະ
ປະຕິບັດຕາມບັນຍັດຂອງເຮົາ ຈົນເຖິງພັນຊົ່ວອາຍຸຄົນ [11]ຢ່າອອກພຣະນາມ ພຣະຜູ້ເປັນເຈົ້າ
ພຣະເຈົ້າ ຂອງ ເຈົ້າຢ່າງບໍ່ສົມຄວນ ດ້ວຍ ວ່າຜູ້ທີ່ອອກພຣະນາມພຣະອົງຢ່າງບໍ່ສົມຄວນນັ້ນ
ພຣະຜູ້ເປັນເຈົ້າ ຈະຊົງຖືວ່າບໍ່ມີໂທດກໍບໍ່ໄດ້ [12]ຈົ່ງຖືວັນສະບາໂຕ ຖືເປັນວັນບໍລິສຸດ ດັ່ງທີ່ພຣະ-
ຜູ້ເປັນເຈົ້າ ພຣະເຈົ້າ ຂອງເຈົ້າຊົງສັ່ງໄວ້ແກ່ເຈົ້າ [13]ຈົ່ງເຮັດການງານທັງໝົດຂອງເຈົ້າຫົກມື້ [14]ແຕ່
ມື້ທີເຈັດນັ້ນ ເປັນວັນສະບາໂຕຂອງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງເຈົ້າ ໃນມື້ນັ້ນຢ່າເຮັດການ
ງານໃດໆ ບໍ່ວ່າເຈົ້າເອງ ຫລືລູກຊາຍ ລູກສາວຂອງເຈົ້າ ຫລືຂ້ອຍໃຊ້ຂອງເຈົ້າ ຫລືງົວຂອງ
ເຈົ້າ ຫລືລາຂອງເຈົ້າ ຫລືສັດໃຊ້ງານຂອງເຈົ້າ ຫລືແຂກທີ່ອາໄສຢູ່ໃນປະຕູເມືອງຂອງເຈົ້າ
ເພື່ອຂ້ອຍໃຊ້ຂອງເຈົ້າຈະໄດ້ຢຸດພັກຄືເຈົ້າ [15]ຈົ່ງລະນຶກວ່າເຈົ້າເຄີຍເປັນຂ້າທາດຢູ່ໃນແຜ່ນດິນ
ເອຢິບ ແລະ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງເຈົ້າໄດ້ພາເຈົ້າອອກມາຈາກບ່ອນນັ້ນດ້ວຍພຣະຫັດ
ອັນຊົງລິດ ແລະດ້ວຍພຣະກອນທີ່ຢຽດອອກ ເຫດສັນນີ້ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງເຈົ້າໄດ້
ຊົງສັ່ງໃຫ້ເຈົ້າຖືຮັກສາວັນສະບາໂຕ [16]ຈົ່ງໃຫ້ກຽດແກ່ບິດາມານດາຂອງເຈົ້າ ດັ່ງທີ່ ພຣະຜູ້ເປັນ-
ເຈົ້າ ພຣະເຈົ້າ ຂອງເຈົ້າຊົງບັນຊາເຈົ້າໄວ້ ເພື່ອເຈົ້າຈະມີຊີວິດຍືນຍາວ ແລະເຈົ້າຈະໄປດີມາດີໃນ
ແຜ່ນດິນຊຶ່ງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງເຈົ້າປະທານໃຫ້ແກ່ເຈົ້າ [17]ຢ່າຂ້າຄົນ [18]ຢ່າລ່ວງປະ-
ເວນີຜົວເມຍເຂົາ [19]ຢ່າລັກຊັບ [20]ຢ່າເປັນພະຍານເທັດໃສ່ຮ້າຍເພື່ອນບ້ານ [21]ຢ່າຢາກໄດ້ພັນລະ
ຍາຂອງເພື່ອນບ້ານ ແລະຢ່າຢາກໄດ້ເຮືອນຂອງເພື່ອນບ້ານ ຄືໄຮ່ນາຂອງລາວ ຫລືຂ້ອຍໃຊ້
ຂອງລາວ ຫລືງົວ ລາຂອງເຂົາ ຫລືສິ່ງໃດໆຊຶ່ງເປັນຂອງເພື່ອນບ້ານ'

[22]ພຣະບັນຍັດ ເຫລົ່າ ນີ້ ພຣະເຈົ້າ ໄດ້ກ່າວ ແກ່ຊຸມນຸມຊົນ ທັງ ປວງ ຂອງ ທ່ານ ທີ່ ພູເຂົາ ມາ ຈາກ
ທ່າມກາງໄຟ ແລະຈາກເມກມືດຄຶ້ມໜາຕຶບ ດ້ວຍພຣະສຸລະສຽງອັນດັງ ແລະບໍ່ໄດ້ຊົງເພີ່ມເຕີມ
ສິ່ງໃດອີກ ແລະພຣະອົງຊົງຈາລຶກໄວ້ເທິງແຜ່ນສີລາສອງແຜ່ນ ແລະປະທານແກ່ຂ້າພະເຈົ້າ
[23]ເມື່ອທ່ານທັງຫລາຍໄດ້ຍິນພຣະສຸລະສຽງອອກມາຈາກຄວາມມືດນັ້ນ (ຂະນະທີ່ພູເຂົານັ້ນມີໄຟ

ລຸກຢູ່) ທ່ານທັງຫລາຍຫຍັບເຂົ້າມາໃກ້ຂ້າພະເຈົ້າ ຄືຫົວໜ້າຕະກູນຂອງທ່ານທັງໝົດ ແລະພວກ
ຜູ້ໃຫຍ່ຂອງທ່ານ 24ແລະທ່ານທັງຫລາຍກ່າວວ່າ 'ເບິ່ງແມ ພຣະຜູ້ເປັນເຈົ້າພຣະເຈົ້າຂອງເຮົາ
ໄດ້ຊົງສະແດງສະຫງ່າລາສີ ແລະຄວາມຍິ່ງໃຫຍ່ຂອງພຣະອົງ ແລະເຮົາໄດ້ຍິນພຣະສຸລະສຽງ
ຂອງພຣະອົງຈາກທ່າມກາງໄຟ ໃນມື້ນີ້ເຮົາໄດ້ເຫັນພຣະເຈົ້າກ່າວກັບມະນຸດ ແລະມະນຸດຍັງຄົງ
ມີຊີວິດຢູ່ໄດ້ 25ເຫດສັນນີ້ ເຮົາທັງຫລາຍຈະຕ້ອງຕາຍເສຍເຮັດຫຍັງ ເພາະວ່າໄຟຍິ່ງໃຫຍ່ນີ້ຈະ
ເຜົາຜານເຮົາ ຖ້າເຮົາໄດ້ຍິນພຣະສຸລະສຽງຂອງພຣະຜູ້ເປັນເຈົ້າພຣະເຈົ້າຂອງເຮົາອີກ ເຮົາກໍ
ຈະຕ້ອງຕາຍ 26ເພາະວ່າໃນບັນດາມະນຸດ ມີໃຜແດ່ໄດ້ຍິນພຣະສຸລະສຽງຂອງພຣະເຈົ້າຜູ້ຊົງ
ພຣະຊົນຢູ່ ກ່າວອອກມາຈາກທ່າມກາງໄຟແບບທີ່ເຮົາໄດ້ຍິນ ແລະຍັງມີຊີວິດຢູ່ໄດ້ 27ທ່ານຈົ່ງ
ເຂົ້າໄປໃກ້ ແລະຟັງທຸກສິ່ງທີ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງເຮົາກ່າວ ແລະນຳເອົາພຣະວັດຈະ-
ນະທັງໝົດທີ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງເຮົາກ່າວແກ່ທ່ານຫລາຍເທື່ອນັ້ນແກ່ເຮົາທັງຫລາຍ
ແລະເຮົາທັງຫລາຍຈະຟັງ ແລະປະຕິບັດຕາມ' 28ເມື່ອທ່ານທັງຫລາຍເວົ້າກັບຂ້າພະເຈົ້ານັ້ນ
ພຣະຜູ້ເປັນເຈົ້າຊົງສະດັບຮັບຟັງສຽງຖ້ອຍຄຳຂອງທ່ານທັງຫລາຍ ແລະພຣະຜູ້ເປັນເຈົ້າບອກ
ກັບຂ້າພະເຈົ້າວ່າ 'ເຮົາໄດ້ຍິນສຽງຖ້ອຍຄຳຂອງຊົນຊາດຊຶ່ງພວກເຂົາເວົ້າກັບເຈົ້າແລ້ວ ສິ່ງທີ່
ພວກເຂົາເວົ້າກັບເຈົ້າເຊັ່ນນັ້ນກໍດີຢູ່ 29ໂອ ຢາກໃຫ້ພວກເຂົາມີຈິດໃຈແບບນີ້ຢູ່ສະເໝີໄປເດໜໍ ຄື
ທີ່ຈະຢຳເກງເຮົາ ແລະຮັກສາບັນຍັດທັງໝົດຂອງເຮົາ ພວກເຂົາທັງຫລາຍກໍຈະສຸກສະບາຍ
ແລະຈະເລີນຢູ່ຕະຫລອດຊົ່ວລູກຫລານຂອງພວກເຂົາເປັນນິດ 30ຈົ່ງກັບໄປບອກແກ່ພວກເຂົາວ່າ
"ເຈົ້າຈົ່ງກັບໄປເຕັນຂອງເຈົ້າທຸກຄົນເຖີດ" 31ແຕ່ຕົວເຈົ້າຈົ່ງຢືນຢູ່ບ່ອນນີ້ໃກ້ເຮົາ ແລະເຮົາຈະ
ບອກຂໍ້ບັນຍັດ ແລະກົດເກນ ແລະກົດໝາຍທັງໝົດແກ່ເຈົ້າ ຊຶ່ງເຈົ້າຈະຕ້ອງສອນພວກເຂົາທັງ-
ຫລາຍເພື່ອພວກເຂົາທັງຫລາຍຈະໄດ້ປະຕິບັດຕາມໃນແຜ່ນດິນທີ່ເຮົາໃຫ້ພວກເຂົາຍຶດຄອງນັ້ນ'
32ເຫດສັນນັ້ນ ທ່ານທັງຫລາຍຈົ່ງລະວັງທີ່ຈະປະຕິບັດຕາມດັ່ງທີ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງ
ທ່ານທັງຫລາຍໄດ້ຊົງສັ່ງໄວ້ນັ້ນ ທ່ານທັງຫລາຍຢ່າຫັນໄປທາງຂວາ ຫລືທາງຊ້າຍ 33ທ່ານຈົ່ງ
ດຳເນີນຕາມວິທີທາງທັງໝົດທີ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານໄດ້ຊົງສັ່ງທ່ານໄວ້ ເພື່ອທ່ານ
ຈະມີຊີວິດຢູ່ ແລະເພື່ອທ່ານຈະໄປດີມາດີ ແລະມີຊີວິດຍືນຍາວຢູ່ໃນແຜ່ນດິນທີ່ທ່ານຈະຍຶດຄອງ
ນັ້ນ"

# ບົດທີ 6

## ການກ່າວຊ້ຳເຖິງພຣະບັນຍັດສິບປະການ

1ຕໍ່ໄປນີ້ແມ່ນກົດບັນຍັດ ພຣະທຳ ແລະຮີດຄອງປະເພນີທັງໝົດທີ່ພຣະຜູ້ເປັນເຈົ້າຊົງບອກ
ໃຫ້ຂ້າພະເຈົ້າສອນພວກທ່ານ ສະນັ້ນ ເມື່ອພວກທ່ານຢູ່ໃນແຜ່ນດິນທີ່ກຳລັງຈະເຂົ້າຍຶດຄອງນັ້ນ
ຈົ່ງໄດ້ເຮັດຕາມພຣະຄຳເຫລົ່ານີ້. 2ທ່ານກັບພວກລູກຫລານຂອງທ່ານຈະຕ້ອງຢຳເກງພຣະຜູ້-
ເປັນເຈົ້າຈົນຕະຫລອດຊີວິດ ແລະປະພຶດຕາມພຣະທຳທັງໝົດຂອງພຣະອົງ ຊຶ່ງຂ້າພະເຈົ້າໄດ້
ບອກທ່ານທັງຫລາຍແລ້ວນັ້ນ ເພື່ອວ່າພວກທ່ານຈະມີອາຍຸໝັ້ນຍືນ. 3ຊາວອິສຣາເອນເອີຍ ຈົ່ງ
ສະດັບຮັບຟັງພຣະທຳ ແລະປະພຶດຕາມເທີ້ນ ເພື່ອກິດຈະການທຸກຢ່າງຂອງພວກທ່ານຈະລຸລ່ວງ

ໄປດ້ວຍດີ ແລ້ວພວກທ່ານກໍຈະກາຍເປັນຊົນຊາດໃຫຍ່ຢູ່ໃນແຜ່ນດິນທີ່ອຸດົມສົມບູນ ເໝືອນຢ່າງ
ພຣະຜູ້ເປັນເຈົ້າ ແຫ່ງບັນພະບູລຸດຂອງພວກທ່ານທັງຫລາຍໄດ້ຊົງສັນຍາໄວ້.
[4]ອິສຣາເອນ ເອີຍ ຈົ່ງຟັງ ເທີ້ນ ພຣະຜູ້ເປັນເຈົ້າ ອົງດຽວ ເທົ່ານັ້ນທີ່ ເປັນ ພຣະເຈົ້າ ຂອງ ເຮົາ.
[5]ຈົ່ງຮັກ ພຣະຜູ້ເປັນເຈົ້າ ໃຫ້ສຸດຈິດ ສຸດໃຈ ແລະສຸດກຳລັງຂອງທ່ານ.
[6-7]ຢ່າລືມສິ່ງທີ່ຂ້າພະເຈົ້າໄດ້ສັ່ງພວກທ່ານໃນມື້ນີ້ ໃຫ້ບອກສອນລູກຫລານດ້ວຍ ເມື່ອພວກ
ທ່ານຢູ່ໃນເຮືອນຫລືອອກໜີໄປກໍດີ ເມື່ອເຮັດວຽກ ຫລືຢຸດພັກກໍດີ ໃຫ້ທ່ອງຈຳຄຳສັ່ງນີ້. [8-9]ໃຫ້
ຕິດມັນໄວ້ຢູ່ແຂນ ແລະເທິງໜ້າຜາກ ພ້ອມທັງໃຫ້ຂຽນໄວ້ຕາມປະຕູເຮືອນຂອງທ່ານດ້ວຍ ເພື່ອ
ເປັນສິ່ງເຕືອນໃຈ.

## ບັນຍັດຂໍ້ສຳຄັນ

[10]ພຣະຜູ້ເປັນເຈົ້າ ຂອງ ເຮົາທັງຫລາຍໄດ້ຊົງສັນຍາແກ່ບັນພະບູລຸດຂອງພວກທ່ານ ຄື ອັບຣາ-
ຮາມ ອີຊາກ ແລະ ຢາໂຄບ ວ່າ ພຣະອົງຈະຊົງມອບ ແຜ່ນດິນຊຶ່ງມີຫົວ ເມືອງ ໃຫຍ່ທີ່ຈະ ເລີນຮຸ່ງ-
ເຮືອງຊຶ່ງທ່ານ ເອງບໍ່ໄດ້ສ້າງ ໃຫ້ແກ່ພວກທ່ານ. [11]ໃນເຮືອນທັງຫລາຍກໍຈະເຕັມໄປດ້ວຍຂອງດີ
ທີ່ທ່ານບໍ່ໄດ້ຫາໄວ້ ມີນ້ຳສ້າງທີ່ພວກທ່ານບໍ່ໄດ້ຂຸດໄວ້ ພ້ອມທັງມີສວນອະງຸ່ນ ແລະສວນໝາກ-
ກອກເທດທີ່ປູກຮຽບຮ້ອຍ ແລ້ວ ສະນັ້ນ ເມື່ອ ພຣະຜູ້ເປັນເຈົ້າ ຊົງນຳພວກທ່ານ ເຂົ້າໄປຢູ່ໃນ
ແຜ່ນດິນແລ້ວ ກໍຈະມີອາຫານການກິນທຸກຢ່າງຕາມຄວາມຕ້ອງການ. [12]ແຕ່ພວກທ່ານຕ້ອງລະ-
ວັງ ໃຫ້ດີ ຈົ່ງຢ່າລືມ ພຣະຜູ້ເປັນເຈົ້າ ຜູ້ຊົງ ນຳພວກທ່ານອອກ ຈາກ ເອຢິບ ບ່ອນຕົກ ເປັນທາດ.
[13]ໃຫ້ຢຳເກງ ແລະຂາບ ໄຫວ້ແຕ່ ພຣະຜູ້ເປັນເຈົ້າ ຂອງທ່ານອົງດຽວ ກັບທັງ ໃຫ້ສາບານ ໂດຍ
ອອກພຣະນາມຂອງພຣະອົງ ເທົ່ານັ້ນ. [14]ຢ່າຂາບ ໄຫວ້ພະ ຂອງ ຊົນ ຊາດອື່ນ ໃດທີ່ຢູ່ອ້ອມແອ້ມ
ທ່ານ. [15]ຖ້າພວກທ່ານຫາກດື້ດ້ານຂາບ ໄຫວ້ພະນັ້ນ ພຣະຜູ້ເປັນເຈົ້າ ຈະຊົງພຣະພິໂລດທ່ານ
ຢ່າງຮຸນແຮງ ແລະຈະທຳລາຍພວກທ່ານຈົນໝົດສິ້ນ ເພາະວ່າ ພຣະຜູ້ເປັນເຈົ້າ ຂອງທ່ານຊົງ
ຫວງແຫນພວກທ່ານ.
[16]ຢ່າທົດລອງ ພຣະຜູ້ເປັນເຈົ້າ ດັ່ງທີ່ພວກທ່ານເຄີຍໄດ້ທົດລອງກັບພຣະອົງມາແລ້ວຢູ່ທີ່ ມາ-
ສາ ນັ້ນ. [17]ຈົ່ງເອົາໃຈໃສ່ເຮັດຕາມກົດບັດບັນຍັດຂອງ ພຣະຜູ້ເປັນເຈົ້າ ແລະຮີດຄອງປະເພນີທັງ
ໝົດທີ່ພຣະອົງໄດ້ຊົງສອນທ່ານ. [18]ໃຫ້ເຮັດແຕ່ສິ່ງທີ່ ພຣະຜູ້ເປັນເຈົ້າ ຊົງເຫັນວ່າດີ ແລະຖືກຕ້ອງ
ເພື່ອທຸກສິ່ງທຸກຢ່າງຈະໄດ້ເປັນໄປໂດຍດີ ແລະເພື່ອຈະໄດ້ເປັນເຈົ້າຂອງແຜ່ນດິນທີ່ອຸດົມສົມບູນ
ຊຶ່ງ ພຣະຜູ້ເປັນເຈົ້າ ຊົງສັນຍາວ່າ ຈະປະທານໃຫ້ແກ່ບັນພະບູລຸດຂອງທ່ານທັງຫລາຍ. [19]ທັງຈະ
ຂັບໄລ່ສັດຕູຂອງພວກທ່ານໜີຕາມທີ່ຊົງສັນຍາໄວ້.
[20]ໃນພາຍໜ້າ ເມື່ອລູກຫລານຂອງທ່ານຖາມວ່າ ເປັນຫຍັງ ພຣະຜູ້ເປັນເຈົ້າ ຂອງເຮົາຈຶ່ງສັ່ງ
ໃຫ້ເຮັດກົດບັນຍັດ ແລະຮີດຄອງປະເພນີເຫລົ່ານີ້. [21]ຈົ່ງບອກພວກເຂົາວ່າ ເມື່ອພວກເຮົາເປັນ
ທາດຂອງກະສັດ ເອຢິບ ພຣະຜູ້ເປັນເຈົ້າ ໄດ້ຊົງຊ່ອຍ ເຫລືອ ເອົາພວກ ເຮົາ ໃຫ້ລອດພົ້ນດ້ວຍ
ອຳນາດອັນຍິ່ງໃຫຍ່. [22]ທັງໄດ້ເຫັນພຣະອົງຊົງ ເຮັດການອັດສະຈັນ ແລະສິ່ງອັນເປັນຕາຢ້ານຕໍ່-
ໜ້າຕໍ່ຕາ ພວກ ເຮົາທັງຫລາຍ ຕໍ່ຊາວ ເອຢິບ ຕໍ່ກະສັດ ຟາຣາໂອ ແລະ ຂ້າລາຊະການທັງໝົດ.
[23]ພຣະອົງຊົງນຳພາພວກເຮົາອອກມາຈາກ ເອຢິບ ແລະຊົງມອບແຜ່ນດິນໃຫ້ເຮົາຢູ່ອາໄສ ດັ່ງທີ່

ພຣະອົງໄດ້ຊົງສັນຍາໄວ້ກັບບັນພະບູລຸດຂອງພວກເຮົານັ້ນ. 24-25ແລ້ວພຣະຜູ້ເປັນເຈົ້າຂອງເຮົາ
ໄດ້ຊົງສັ່ງໃຫ້ເຊື່ອຟັງພຣະທຳທັງໝົດນີ້ ແລະໃຫ້ເຄົາລົບຢຳເກງພຣະອົງ ຖ້າພວກເຮົາປະຕິບັດ
ຕາມທຸກສິ່ງທຸກຢ່າງທີ່ພຣະອົງຊົງສັ່ງນັ້ນ ກໍຈະເປັນການຖືກຕ້ອງດີ ພຣະອົງກໍຈະຊົງຮັກແພງ
ແລະເບິ່ງແຍງພວກເຮົາຕໍ່ໄປ ພ້ອມທັງເຮັດໃຫ້ປະເທດຂອງເຮົາຈະເລີນຮຸ່ງເຮືອງຕະຫລອດໄປ.

# ບົດທີ 7

## ຄຳຕັກເຕືອນໃຫ້ເຊື່ອຟັງ

1ພຣະຜູ້ເປັນເຈົ້າຊົງນຳພວກທ່ານໄປຍັງແຜ່ນດິນ ທີ່ພວກທ່ານກຳລັງຈະເຂົ້າຍຶດຄອງ ແລະ
ຈະຊົງຂັບໄລ່ຫລາຍຊົນຊາດອອກໜີໄປ ເມື່ອພວກທ່ານໄປຮອດ ພຣະອົງຈະຊົງຂັບໄລ່ຊົນຊາດ
ໃຫຍ່ ແລະມີອຳນາດກວ່າພວກທ່ານເຈັດຊາດດັ່ງຕໍ່ໄປນີ້ອອກໜີໄປ ຄື ຊາວຮິດຕີ ກີກາຊີ
ອະໂມຣິດ ເປຣິຊີ ຮີວີ ແລະເຢບຸດ. 2ເມື່ອພຣະຜູ້ເປັນເຈົ້າຊົງໃຫ້ຊົນຊາດເຫລົ່ານີ້ເສຍໄຊ ແລະ
ຢູ່ໃຕ້ອຳນາດຂອງທ່ານແລ້ວ ພວກເຂົາກໍຈະຕ້ອງຖືກພວກທ່ານລົງໂທດເຖິງຕາຍ ຢ່າໄດ້ເມດຕາ
ແລະເຮັດສັນຍາກັບພວກເຂົາ. 3ພວກທ່ານຕະຫລອດທັງລູກຫລານຂອງທ່ານ ຢ່າໄດ້ແຕ່ງງານ
ກັບພວກເຂົາ. 4ເພາະວ່າເຂົາຈະພາພວກລູກຫລານຂອງທ່ານໜີຈາກພຣະຜູ້ເປັນເຈົ້າໄປຂາບ
ໄຫວ້ພະອື່ນ ແລ້ວພຣະຜູ້ເປັນເຈົ້າຈະຊົງພຣະພິໂລດ ແລະທຳລາຍພວກທ່ານທັນທີ. 5ໃຫ້ພວກ
ທ່ານເຮັດກັບປະຊາຊົນເຫລົ່ານີ້ ດັ່ງນີ້ ຄືໃຫ້ພວກທ່ານທຳລາຍແທ່ນບູຊາ ທັບເສົາຫີນສັກສິດ
ແລະເຜົາແທ່ນບູຊາຮູບເຄົາລົບຂອງພວກເຂົາຖິ້ມ. 6ທີ່ຕ້ອງເຮັດດັ່ງນັ້ນ ກໍເພາະວ່າ ພວກທ່ານ
ເປັນຄົນຂອງພຣະຜູ້ເປັນເຈົ້າພຣະອົງໄດ້ຊົງເລືອກເອົາພວກທ່ານມາຈາກຊົນຊາດທັງປວງໃນ
ທົ່ວໂລກ ເພື່ອໃຫ້ເປັນຊົນຊາດພິເສດຂອງພຣະອົງເອງ.

7ພຣະຜູ້ເປັນເຈົ້າຊົງຮັກ ແລະເລືອກພວກທ່ານ ບໍ່ແມ່ນຍ້ອນຊົງເຫັນວ່າພວກທ່ານມີຈຳນວນ
ຫລວງຫລາຍກວ່າຊົນຊາດອື່ນ. 8ຕາມຄວາມຈິງແລ້ວ ພວກທ່ານເປັນຊົນຊາດນ້ອຍທີ່ສຸດໃນ
ໂລກ ພຣະອົງຊົງຮັກພວກທ່ານດ້ວຍໃຈຈິງ ແລະຊົງຮັກສາຄຳໝັ້ນສັນຍາທີ່ຊົງໃຫ້ໄວ້ກັບບັນ-
ພະບູລຸດຂອງພວກທ່ານທັງຫລາຍ ດ້ວຍເຫດນີ້ ພຣະອົງຈຶ່ງຊົງຊ່ອຍພວກທ່ານໃຫ້ລອດພົ້ນຈາກ
ການເປັນທາດຂອງກະສັດເອຢິບດ້ວຍລິດທານຸພາບອັນຍິ່ງໃຫຍ່. 9ຈົ່ງຈື່ໄວ້ວ່າ ພຣະຜູ້ເປັນເຈົ້າ
ຂອງພວກທ່ານເທົ່ານັ້ນທີ່ຊົງເປັນພຣະເຈົ້າ ພຣະອົງຊົງສັດຊື່ ຊົງເຮັດຕາມຄຳໝັ້ນສັນຍາ ແລະ
ຊົງມີຄວາມຮັກໝັ້ນຄົງຫລາຍຊົ່ວອາຍຸພັນຄົນຕໍ່ຜູ້ທີ່ຮັກພຣະອົງ ແລະຕໍ່ຜູ້ທີ່ເຊື່ອຟັງຄຳສັ່ງສອນ
ຂອງພຣະອົງ. 10ແຕ່ຈະຊົງລົງໂທດຜູ້ທີ່ກຽດຊັງພຣະອົງໂດຍໄວ. 11ດ້ວຍເຫດນີ້ແຫລະ ຈົ່ງເຊື່ອ
ຟັງແລະເຮັດຕາມກົດບັນຍັດ ແລະຮີດຄອງປະເພນີທັງໝົດ ທີ່ຂ້າພະເຈົ້າໄດ້ບອກສອນພວກ
ທ່ານແລ້ວໃນມື້ນີ້.

## ໄພ່ພົນຂອງພຣະຜູ້ເປັນເຈົ້າ

12ຖ້າພວກທ່ານເຊື່ອຟັງ ແລະເຮັດຕາມຄຳສັ່ງເຫລົ່ານີ້ ພຣະຜູ້ເປັນເຈົ້າຂອງພວກທ່ານຈະຊົງ
ເຮັດຕາມຄຳໝັ້ນສັນຍາ ທີ່ພຣະອົງຊົງໃຫ້ໄວ້ກັບພວກທ່ານສືບຕໍ່ໄປ ແລະຈະຊົງສະແດງຄວາມ
ຮັກໝັ້ນຄົງຕໍ່ພວກທ່ານ ເໝືອນດັ່ງພຣະອົງໄດ້ຊົງສັນຍາໄວ້ກັບບັນພະບູລຸດຂອງທ່ານທັງຫລາຍ

ນັ້ນ. [13]ໃນນ້ຳມີປາ ໃນທົ່ງນາມີເຂົ້າ ມີນ້ຳອະງຸ່ນ ມີນ້ຳມັນໝາກກອກເທດ ມີງົວຄວາຍ ແລະ
ຝູງແບ້ຈຳນວນຫລວງຫລາຍ ຈະຊົງປະທານພອນເຫລົ່ານີ້ໃຫ້ພວກທ່ານໃນແຜ່ນດິນທີ່ຊົງສັນຍາ
ວ່າຈະໃຫ້ທ່ານ. [14]ຈະບໍ່ມີຊົນຊາດໃດໄດ້ຮັບພອນອັນປະເສີດເໝືອນກັບພວກທ່ານ ຈະບໍ່ມີຄົນ
ແລະສັດລ້ຽງໂຕໃດໃນທ່າມກາງພວກທ່ານເປັນໝັນ. [15]ພຣະຜູ້ເປັນເຈົ້າຈະຊົງຄຸ້ມຄອງໃຫ້ພວກ
ທ່ານພົ້ນຈາກຄວາມເຈັບໄຂ້ໄດ້ປ່ວຍທັງປວງ ຈະບໍ່ຊົງນຳໂລກຮ້າຍແຮງໃດໆ ດັ່ງທ່ານໄດ້ເຫັນ
ໃນ ເອຢິບ ນັ້ນມາຖືກພວກທ່ານ ແຕ່ຈະຊົງນຳມາຖືກສັດຕູທັງປວງຂອງພວກທ່ານ.
[16]ຊົນຊາດທັງປວງທີ່ ພຣະຜູ້ເປັນເຈົ້າ ຊົງມອບໃຫ້ຢູ່ໃຕ້ອຳນາດຂອງພວກທ່ານນັ້ນ ຈົ່ງທຳ-
ລາຍເສຍ ຢ່າໄດ້ເຮັດຕາມພວກເຂົາ ແລະຢ່າຂາບໄຫວ້ພະທັງຫລາຍຂອງພວກເຂົາ ເພາະວ່າ
ການເຮັດຢ່າງນັ້ນເປັນການທຳລາຍພວກທ່ານເອງ. [17]ຢ່າຄິດໃນໃຈວ່າ ຊົນຊາດເຫລົ່ານີ້ມີຈຳ-
ນວນຫລາຍກວ່າທ່ານ ຈົນວ່າພວກທ່ານຈະບໍ່ສາມາດຂັບໄລ່ພວກເຂົາໄດ້. [18]ຢ່າສູ້ຢ້ານພວກເຂົາ
ໃຫ້ລະນຶກເຖິງສິ່ງທີ່ ພຣະຜູ້ເປັນເຈົ້າ ຂອງພວກທ່ານໄດ້ເຮັດຕໍ່ກະສັດ ເອຢິບ ແລະຕໍ່ພົນລະເມືອງ
ຂອງພຣະອົງ. [19]ຄືໄດ້ຊົງນຳໂຣກລະບາດອັນຮ້າຍແຮງມາຖືກຊາວ ເອຢິບ ຊົງເຮັດການອັດສະ-
ຈັນ ແລະໝາຍສຳຄັນຕໍ່ໜ້າຕໍ່ຕາພວກທ່ານ ພ້ອມທັງຊົງໃຊ້ອຳນາດອັນຍິ່ງໃຫຍ່ຊ່ອຍເອົາພວກ
ທ່ານອອກມາ ພຣະອົງຈະຊົງທຳລາຍຊົນຊາດທັງປວງທີ່ທ່ານຢ້ານໃນເວລານີ້ເໝືອນຊົງທຳລາຍ
ຊາວ ເອຢິບ ນັ້ນ. [20]ຍິ່ງໄປກວ່ານັ້ນ ພຣະອົງຍັງຈະຊົງໃຫ້ຝູງຕໍ່ຝູງແຕນຕອດຜູ້ທີ່ໜີໄປລີ້ຢູ່ດ້ວຍ.
[21]ຢ່າສູ້ຢ້ານຊົນຊາດເຫລົ່ານີ້ ພຣະຜູ້ເປັນເຈົ້າ ຈະຊົງສະຖິດຢູ່ນຳພວກທ່ານ ພຣະອົງຊົງເປັນ
ພຣະເຈົ້າ ອົງຍິ່ງໃຫຍ່ທີ່ໜ້າຢ້ານ ແລະຊົງຂັບໄລ່ຊົນຊາດເຫລົ່ານີ້ອອກໜີຈາກທ່ານເທື່ອລະ
ໜ້ອຍ. [22]ແຕ່ທ່ານຢ່າກຳຈັດພວກເຂົາໃຫ້ໝົດໄປໃນທັນທີ ເພາະຖ້າເຮັດຢ່າງນັ້ນ ບັນດາສັດປ່າ
ຈະມີຫລາຍຂຶ້ນ ແລ້ວມັນຈະມາຣົບກວນພວກທ່ານ. [23]ພຣະຜູ້ເປັນເຈົ້າຈະຊົງໃຫ້ພວກສັດຕູຢູ່ໃຕ້
ອຳນາດຂອງທ່ານ ຈະຊົງເຮັດໃຫ້ພວກເຂົາເກີດຄວາມວຸ້ນວາຍຈົນຈິບຫາຍໄປ. [24]ຈະຊົງໃຫ້
ພວກກະສັດຂອງພວກເຂົາທັງຫລາຍຢູ່ໃຕ້ອຳນາດຂອງທ່ານ ທ່ານຈະຂ້າພວກເຂົາຕາຍ ແລະຊື່
ຂອງພວກເຂົາກໍຈະໝົດສິ້ນໄປ ພວກທ່ານຈະທຳລາຍທຸກໆ ຄົນໂດຍບໍ່ມີໃຜຈະຂັດຂວາງໄດ້.
[25]ຈົ່ງເຜົາຮູບເຄົາລົບຂອງພວກເຂົາຖິ້ມ ຢ່າຄິດຢາກໄດ້ເງິນຫລືຄຳທີ່ໂອບຮູບນັ້ນ ແລະຢ່າໄດ້ນຳ
ມັນໄປເປັນຂອງທ່ານ ຖ້າທ່ານເຮັດຢ່າງນັ້ນຈະເປັນອັນຕະລາຍ ເພາະວ່າ ພຣະຜູ້ເປັນເຈົ້າ ຊົງ
ກຽດຊັງຮູບເຄົາລົບ. [26]ຢ່ານຳຮູບເຄົາລົບໃດໆ ເຂົ້າໄປໃນບ້ານເຮືອນຂອງຕົນ ເພາະຢ້ານວ່າຄຳ
ສາບແຊ່ງທີ່ມີຢູ່ໃນນັ້ນຈະຕົກຖືກທ່ານ ໃຫ້ກຽດຊັງຮູບເຄົາລົບເຫລົ່ານີ້ຢ່າງທີ່ສຸດ ເພາະວ່າມັນ
ເປັນສິ່ງທີ່ ພຣະຜູ້ເປັນເຈົ້າ ຊົງສາບແຊ່ງ.

## ບົດທີ 8

### ພຣະເຈົ້າຊົງອວຍພອນໃຫ້ຜູ້ທີ່ເຊື່ອຟັງ

[1]ທຸກສິ່ງທີ່ຂ້າພະເຈົ້າໄດ້ບອກສອນທ່ານໃນມື້ນີ້ ຈົ່ງເຮັດຕາມດ້ວຍຄວາມສັດຊື່ ເພື່ອທ່ານທັງ-
ຫລາຍຈະມີຊີວິດຢູ່ ມີລູກຫລານຫລາຍ ແລະໄດ້ເຂົ້າຍຶດຄອງແຜ່ນດິນທີ່ ພຣະຜູ້ເປັນເຈົ້າ ຊົງ
ສັນຍາໄວ້ກັບບັນພະບູລຸດຂອງທ່ານທັງຫລາຍ. [2]ຈົ່ງລະນຶກວ່າ ພຣະຜູ້ເປັນເຈົ້າ ຂອງທ່ານໄດ້ຊົງ

ນຳພາພວກທ່ານເດີນທາງຢູ່ໃນຖິ່ນແຫ້ງແລ້ງກັນດານຕະຫລອດສີ່ສິບປີນັ້ນເປັນຢ່າງໃດ ພຣະ-
ອົງຊົງທົດລອງທ່ານດ້ວຍຄວາມຍາກລຳບາກ ເພື່ອຈະຊົງຮູ້ວ່າຈິດໃຈຂອງພວກທ່ານເປັນຢ່າງ-
ໃດ ແລະທ່ານຈະເຊື່ອຟັງຂໍ້ຄຳສັ່ງສອນຂອງພຣະອົງຫລືບໍ່. [3]ພຣະອົງຊົງເຮັດໃຫ້ທ່ານອຶດຢາກ
ແຕ່ຊົງປະທານ ມານາ ໃຫ້ພວກທ່ານກິນຊຶ່ງເປັນອາຫານທີ່ທ່ານ ແລະບັນພະບູລຸດຂອງພວກ
ທ່ານບໍ່ເຄີຍກິນມາກ່ອນ ພຣະອົງຊົງເຮັດດັ່ງນີ້ກໍເພື່ອສອນທ່ານວ່າ ບໍ່ແມ່ນແຕ່ອາຫານເທົ່ານັ້ນທີ່
ໃຫ້ມະນຸດມີຊີວິດຢູ່ ແລະມະນຸດຈຳເປັນຕ້ອງລ້ຽງຊີວິດດ້ວຍພຣະຄຳທຸກຂໍ້ທີ່ອອກມາຈາກພຣະ-
ໂອດຂອງພຣະເຈົ້າ. [4]ໃນເວລາສີ່ສິບປີນັ້ນ ເສື້ອຂອງພວກທ່ານບໍ່ໄດ້ຂາດ ແລະຕີນບໍ່ໄດ້ໄຄ່
ບວມ. [5]ຈົ່ງຈື່ໄວ້ວ່າ ພຣະຜູ້ເປັນເຈົ້າຂອງພວກທ່ານຊົງຕີສອນແລະຊົງລົງໂທດທ່ານເໝືອນພໍ່ຕີ
ສອນລູກ. [6]ດັ່ງນັ້ນແຫລະ ຈົ່ງເຮັດຕາມຄຳຂອງພຣະຜູ້ເປັນເຈົ້າຊົງບອກສອນ ຄືປະພຶດຕາມ
ບົດບັນຍັດຂອງພຣະອົງ ແລະເຄົາລົບຢຳເກງພຣະອົງ. [7]ພຣະຜູ້ເປັນເຈົ້າຈະຊົງນຳພາພວກ
ທ່ານເຂົ້າໄປຍັງແຜ່ນດິນທີ່ມີແມ່ນ້ຳ ມີນ້ຳອອກບໍ່ ແລະມີນ້ຳບາດານໄຫລອອກມາແຕ່ຮ່ອມພູ
ແລະພູນ້ອຍທັງຫລາຍ. [8]ມີເຂົ້າບາເລ ເຂົ້າເດືອຍ ຕົ້ນອະງຸ່ນ ຕົ້ນເດື່ອເທດ ຕົ້ນໝາກພິລາ ນ້ຳ-
ມັນໝາກກອກເທດ ແລະນ້ຳເຜີ້ງ. [9]ຢູ່ທີ່ນັ້ນ ພວກທ່ານຈະບໍ່ອຶດຫິວ ຫລືເຮັດສິ່ງໃດໂດຍຂາດ
ປະໂຫຍດເລີຍ ມັນເປັນແຜ່ນດິນທີ່ມີບໍ່ເຫລັກ ແລະບໍ່ທອງແດງຫລາຍ. [10]ພວກທ່ານຈະມີອາ-
ຫານກິນຕາມຄວາມຕ້ອງການ ແລະຈະຂອບພຣະຄຸນພຣະຜູ້ເປັນເຈົ້າຂອງພວກທ່ານ ຍ້ອນວ່າ
ພຣະອົງຊົງໂຜດປະທານແຜ່ນດິນທີ່ອຸດົມສົມບູນນີ້ໃຫ້.

## ແຜ່ນດິນທີ່ອຸດົມສົມບູນ

[11]ຈົ່ງລະວັງໃຫ້ດີ ຢ່າຫລົງລືມພຣະຜູ້ເປັນເຈົ້າຂອງພວກທ່ານ ຈົ່ງເຮັດຕາມກົດບັນຍັດ ແລະ
ຮີດຄອງປະເພນີທັງໝົດຂອງພຣະອົງ ຊຶ່ງຂ້າພະເຈົ້າໄດ້ບອກທ່ານແລ້ວໃນມື້ນີ້. [12]ເມື່ອພວກ
ທ່ານມີອາຫານການກິນຕາມຄວາມຕ້ອງການ ແລະໄດ້ສ້າງບ້ານເຮືອນດີໆ ຢູ່. [13]ມີຝູງງົວຄວາຍ
ແລະຝູງແກະ ມີເງິນຄຳ ແລະສິ່ງຂອງອື່ນໆ ເພີ່ມທະວີຫລາຍຂຶ້ນແລ້ວ. [14]ພວກທ່ານຈົ່ງລະວັງ
ຢ່າໄດ້ຈອງຫອງຂຶ້ນຈົນຫລົງລືມພຣະຜູ້ເປັນເຈົ້າ ຜູ້ຊົງນຳທ່ານທັງຫລາຍອອກມາຈາກປະເທດ
ເອຢິບບ່ອນຕົກເປັນທາດ. [15]ພຣະອົງຊົງນຳພາພວກທ່ານຜ່ານຖິ່ນແຫ້ງແລ້ງກັນດານອັນກວ້າງ
ໃຫຍ່ໄພສານ ແລະເປັນຕາໜ້າຢ້ານ ຊຶ່ງມີງູຮ້າຍ ແລະແມງງອດ ເມື່ອຢູ່ໃນດິນແຫ້ງແລ້ງ ແລະ
ບໍ່ມີນ້ຳ ກໍເຮັດໃຫ້ມີນ້ຳໄຫລອອກມາຈາກຫີນໃຫ້ພວກທ່ານໄດ້ດື່ມ. [16]ຊົງປະທານ ມານາ ໃຫ້ກິນ
ໃນຖິ່ນແຫ້ງແລ້ງກັນດານ ຊຶ່ງເປັນອາຫານທີ່ບັນພະບູລຸດຂອງພວກທ່ານບໍ່ເຄີຍກິນມາກ່ອນ ຊົງ
ທົດລອງພວກທ່ານດ້ວຍຄວາມລຳບາກ ເພື່ອວ່າໃນບັ້ນປາຍຈະຊົງປະທານຂອງດີໃຫ້ທ່ານ.
[17]ດັ່ງນັ້ນ ພວກທ່ານຢ່າຄິດວ່າຊັບສົມບັດນີ້ຫາມາໄດ້ດ້ວຍກຳລັງ ແລະເຫື່ອແຮງຂອງພວກທ່ານ
ເອງ. [18]ຈົ່ງຈື່ໄວ້ວ່າ ພວກທ່ານຮັ່ງມີຍ້ອນເຫື່ອແຮງທີ່ພຣະຜູ້ເປັນເຈົ້າຊົງປະທານໃຫ້ ພຣະອົງ
ຊົງເຮັດດັ່ງນີ້ ກໍຍ້ອນວ່າຊົງສັດຊື່ຕໍ່ຄຳໝັ້ນສັນຍານັ້ນຈົນເທົ່າທຸກມື້ນີ້. [19]ຢ່າປະຖິ້ມພຣະຜູ້ເປັນ-
ເຈົ້າໄປຂາບໄຫວ້ ແລະບົວລະບັດພະອື່ນ ຖ້າທ່ານຫາກເຮັດດັ່ງນີ້ ຂ້າພະເຈົ້າຂໍເຕືອນໃນມື້ນີ້ວ່າ
ພວກທ່ານຈະຈິບຫາຍໄປແນ່ນອນ. [20]ຖ້າບໍ່ເຊື່ອຟັງພຣະຜູ້ເປັນເຈົ້າ ພວກທ່ານຈະຈິບຫາຍໄປ
ເໝືອນຊົນຊາດທີ່ພຣະອົງໄດ້ຊົງທຳລາຍຕໍ່ໜ້າທ່ານນັ້ນ.

# ບົດທີ 9

## ຄຳຕັກເຕືອນບໍ່ໃຫ້ລືມພຣະຜູ້ເປັນເຈົ້າ

1ຊົນຊາດ ອິສຣາເອນ ເອີຍ ຈົ່ງຟັງເດີ້ ພວກທ່ານກຳລັງຈະຂ້າມແມ່ນ້ຳຢໍແດນ ໄປຍຶດຄອງ
ແຜ່ນດິນຂອງຊົນຊາດໃຫຍ່ ແລະແຂງແຮງກວ່າທ່ານ ເມືອງກໍໃຫຍ່ ກຳແພງກໍສູງຈຸຟ້າ. 2ປະ-
ຊາຊົນກໍມີຮູບຮ່າງສູງໃຫຍ່ ມີຄວາມສາມາດຢ່າງເລີດລ້ຳ ແລະຄຳທີ່ເລົ່າລືກັນວ່າ ບໍ່ມີໃຜຕໍ່ສູ້ກັບ
ພວກເຂົາໄດ້ ພວກທ່ານກໍເຄີຍໄດ້ຍິນມາແລ້ວ. 3ແຕ່ບັດນີ້ ທ່ານຈະເຫັນດ້ວຍຕົວທ່ານເອງວ່າ
ພຣະຜູ້ເປັນເຈົ້າ ຈະນຳໜ້າພວກທ່ານໄປເໝືອນໄຟເພື່ອເຜົາຜານ ຈະຊົງໃຫ້ພວກເຂົາພ່າຍແພ້ຕໍ່
ພວກທ່ານ ແລະພວກເຂົາຈະຖືກພວກທ່ານຂັບໄລ່ພວກເຂົາອອກໄປແລະສ້າງຄວາມຈິບຫາຍໃຫ້
ແກ່ພວກເຂົາຕາມດັ່ງພຣະອົງໄດ້ຊົງສັນຍາໄວ້. 4-5ຫລັງຈາກ ພຣະຜູ້ເປັນເຈົ້າ ຊົງຂັບໄລ່ພວກເຂົາ
ອອກໄປຈາກທ່ານແລ້ວ ຢ່າໄດ້ພາກັນເວົ້າວ່າ, “ພຣະອົງຊົງນຳທ່ານເຂົ້າມາຄອບຄອງແຜ່ນດິນ
ນີ້ຍ້ອນຄວາມດີເດັ່ນ ແລະກິດຈະການ ຂອງພວກທ່ານ ເອງ” ແຕ່ພຣະອົງຊົງຂັບໄລ່ປະຊາຊົນ
ເຫລົ່ານີ້ອອກໄປເພາະພວກເຂົາເຮັດຊົ່ວ ເພາະວ່າ ພຣະອົງໄດ້ຮັກສາຄຳໝັ້ນສັນຍາ ທີ່ຊົງໃຫ້ໄວ້
ກັບບັນພະບູລຸດຂອງທ່ານທັງຫລາຍ ຄື ອັບຣາຮາມ ອີຊາກ ແລະ ຢາໂຄບ. 6ສະນັ້ນທ່ານທັງ-
ຫລາຍຈົ່ງຮັບຮູ້ໄວ້ວ່າ ພຣະຜູ້ເປັນເຈົ້າ ຈະບໍ່ຊົງປະທານແຜ່ນດິນທີ່ອຸດົມສົມບູນນີ້ໃຫ້ຍ້ອນກິດ-
ຈະການຂອງພວກທ່ານ ເພາະວ່າ ທ່ານທັງຫລາຍເປັນຊົນຊາດທີ່ດື້ດ້ານ.

7ຢ່າລືມວ່າພວກທ່ານໄດ້ເຮັດໃຫ້ ພຣະຜູ້ເປັນເຈົ້າ ຊົງພຣະພິໂລດ ໃນ ຖິ່ນ ແຫ້ງແລ້ງກັນດານ
ໄດ້ກະບົດຕໍ່ສູ້ພຣະອົງຕັ້ງແຕ່ມື້ອອກມາຈາກປະເທດ ເອຢິບ ຈົນມາຮອດນີ້. 8ແມ່ນແຕ່ໃນພູຊີນາຍ
ພວກທ່ານກໍເຮັດໃຫ້ພຣະອົງຊົງພຣະພິໂລດຫລາຍຈົນວ່າພໍທີ່ຈະທຳລາຍພວກທ່ານໄດ້. 9ເມື່ອ
ຂ້າພະເຈົ້າຂຶ້ນໄປຮັບເອົາແຜ່ນຫີນເທິງພູ ຄືແຜ່ນຫີນແຫ່ງຄຳໝັ້ນສັນຍາທີ່ ພຣະຜູ້ເປັນເຈົ້າ ຊົງໃຫ້
ໄວ້ກັບທ່ານທັງຫລາຍນັ້ນ ຂ້າພະເຈົ້າໄດ້ພັກຢູ່ທີ່ນັ້ນສີ່ສິບມື້ສີ່ສິບຄືນ ໂດຍບໍ່ໄດ້ກິນເຂົ້າ ຫລືດື່ມ-
ນ້ຳເລີຍ. 10ແລ້ວ ພຣະຜູ້ເປັນເຈົ້າ ໄດ້ຊົງປະທານຫີນສອງແຜ່ນໃຫ້ຂ້າພະເຈົ້າ ເປັນແຜ່ນຫີນທີ່
ນິ້ວພຣະຫັດຂອງພຣະອົງເອງ ໄດ້ຊົງຈາລຶກພຣະທຳໃສ່ ຊຶ່ງເປັນພຣະທຳທີ່ຊົງກ່າວກັບທ່ານທັງ-
ຫລາຍອອກມາຈາກໄຟໃນມື້ຊຸມນຸມກັນຢູ່ ເທິງພູນັ້ນ. 11ຫລັງຈາກຄົບສີ່ສິບມື້ສີ່ສິບຄືນ ແລ້ວ
ພຣະຜູ້ເປັນເຈົ້າ ກໍຊົງປະທານແຜ່ນຫີນທີ່ຈາລຶກຄຳສັນຍາໃຫ້ຂ້າພະເຈົ້າ. 12ພຣະຜູ້ເປັນເຈົ້າ ໄດ້
ຊົງກ່າວຕໍ່ຂ້າພະເຈົ້າໃນເວລານັ້ນວ່າ, “ຈົ່ງລົງໄປຈາກພູດຽວນີ້ ດ້ວຍວ່າປະຊາຊົນທີ່ເຈົ້ານຳມາ
ຈາກປະເທດ ເອຢິບ ນັ້ນໄດ້ຫລົງຜິດເສຍແລ້ວ ຄືພວກເຂົາໄດ້ຫັນໜີຈາກທາງທີ່ເຮົາໄດ້ສັ່ງໃຫ້
ປະຕິບັດນັ້ນ ພວກເຂົາໄດ້ຫລໍ່ຮູບເຄົາລົບຂຶ້ນສຳລັບຕົວເອງ.” 13ພຣະຜູ້ເປັນເຈົ້າ ຍັງໄດ້ກ່າວຕໍ່
ຂ້າພະເຈົ້າວ່າ, “ເຮົາຮູ້ດີວ່າປະຊາຊົນເຫລົ່ານີ້ຫົວດື້. 14ສະນັ້ນ ຢ່າຂັດຂວາງເຮົາ ເຮົາຕັ້ງໃຈຈະ
ທຳລາຍພວກເຂົາ ເພື່ອບໍ່ໃຫ້ຜູ້ໃດລະນຶກເຖິງພວກເຂົາອີກຕໍ່ໄປ ແລ້ວເຮົາຈະເຮັດໃຫ້ເຈົ້າໄດ້ເປັນ
ພໍ່ຂອງຊົນຊາດໜຶ່ງທີ່ໃຫຍ່ແລະເຂັ້ມແຂງ.”

15ຫລັງຈາກນັ້ນ ຂ້າພະເຈົ້າຈຶ່ງໄດ້ກັບຄືນລົງມາຈາກພູ ຊຶ່ງໄຟກຳລັງລຸກຢູ່ ໂດຍໄດ້ຖືແຜ່ນ
ຫີນຄຳໝັ້ນສັນຍາສອງແຜ່ນລົງມາພ້ອມ. 16ແລ້ວຂ້າພະເຈົ້າກໍໄດ້ພົບວ່າ ພວກທ່ານໄດ້ລະເມີດ
ຄຳສັ່ງທີ່ ພຣະຜູ້ເປັນເຈົ້າ ຊົງໃຫ້ໄວ້ນັ້ນ ແລະໄດ້ເຫັນພວກທ່ານເຮັດບາບຕໍ່ສູ້ພຣະອົງ ດ້ວຍການ

ຫລໍ່ຮູບງົວນ້ອຍໄວ້ຂາບໄຫວ້. 17ດ້ວຍເຫດນັ້ນ ຂ້າພະເຈົ້າຈຶ່ງໄດ້ໂຍນຫີນສອງແຜ່ນນັ້ນຖິ້ມຕໍ່ໜ້າ
ຕໍ່ຕາພວກທ່ານໃຫ້ມັນແຕກມຸ່ນເສຍ. 18ແລ້ວຂ້າພະເຈົ້າກໍກົ້ມຂາບລົງຕໍ່ພຣະພັກ ພຣະຜູ້ເປັນເຈົ້າ
ອີກເທື່ອໜຶ່ງ ເປັນເວລາສີ່ສິບມື້ສີ່ສິບຄືນ ໂດຍບໍ່ໄດ້ກິນເຂົ້າຫລືດື່ມນໍ້າເລີຍ ທີ່ເຮັດດັ່ງນີ້ ກໍຍ້ອນ
ພວກທ່ານເຮັດບາບຕໍ່ສູ້ ພຣະຜູ້ເປັນເຈົ້າ ແລະເຮັດໃຫ້ພຣະອົງຊົງພຣະພິໂລດ. 19ເພາະຂ້າພະ-
ເຈົ້າຢ້ານພຣະພິໂລດອັນຮຸນແຮງຂອງພຣະອົງຈະຫລາຍພໍທີ່ຈະທຳລາຍພວກທ່ານໄດ້ ແຕ່ພຣະ-
ອົງກໍຍັງຊົງຟັງຂ້າພະເຈົ້າອີກເທື່ອໜຶ່ງ. 20ພຣະຜູ້ເປັນເຈົ້າ ຊົງພຣະພິໂລດ ອາໂຣນ ພໍທີ່ຈະຂ້າ
ລາວໄດ້ ຂ້າພະເຈົ້າຈຶ່ງໄດ້ອ້ອນວອນເພື່ອລາວໃນຕອນນັ້ນ. 21ພ້ອມທັງໄດ້ເອົາສິ່ງທີ່ເປັນບາບ
ຄືຮູບງົວນ້ອຍທີ່ພວກທ່ານເຮັດໄວ້ບູຊານັ້ນໃສ່ໄຟ ແລ້ວນຳມາບົດໃຫ້ລະອຽດ ແລ້ວເທລົງໃສ່ແມ່-
ນໍ້າທີ່ໄຫລລົງມາຈາກພູ. 22ເມື່ອຢູ່ທີ່ ຕາເບຣາ ມາສາ ແລະ ກິບໂຣດ-ຮັດຕາວາ ນັ້ນ ພວກທ່ານ
ໄດ້ເຮັດໃຫ້ ພຣະຜູ້ເປັນເຈົ້າ ຊົງພຣະພິໂລດ. 23ແລະ ເມື່ອຊົງໃຊ້ທ່ານໄປຈາກ ກາເດັດ-ບາເນອາ
ເພື່ອຍຶດຄອງເອົາແຜ່ນດິນທີ່ຊົງປະທານໃຫ້ ພວກທ່ານກໍໄດ້ກະບົດຕໍ່ສູ້ພຣະອົງອີກ ໂດຍບໍ່ໄວ້
ວາງໃຈ ຫລືເຊື່ອຟັງພຣະອົງເລີຍ. 24ພວກທ່ານໄດ້ກະບົດຕໍ່ສູ້ ພຣະຜູ້ເປັນເຈົ້າ ຕະຫລອດມາ
ຕັ້ງແຕ່ມື້ທີ່ຂ້າພະເຈົ້າໄດ້ຮູ້ຈັກກັບພວກທ່ານ.

25ດັ່ງນັ້ນ ຂ້າພະເຈົ້າຈຶ່ງກົ້ມຂາບລົງຕໍ່ພຣະພັກ ພຣະຜູ້ເປັນເຈົ້າ ສີ່ສິບມື້ສີ່ສິບຄືນ ເພາະວ່າ
ພຣະອົງຊົງຕັດສິນພຣະໄທຈະທຳລາຍພວກທ່ານ. 26ຂ້າພະເຈົ້າໄດ້ອ້ອນວອນວ່າ ຂ້າແດ່ ພຣະ-
ຜູ້ເປັນເຈົ້າ ຂໍຢ່າຊົງທຳລາຍໄພ່ພົນພິເສດຂອງພຣະອົງ ຜູ້ຊຶ່ງພຣະອົງຊົງໂຜດຊ່ອຍເອົາອອກ
ຈາກ ເອຢິບ ດ້ວຍຄວາມຍິ່ງໃຫຍ່ ແລະລິດທານຸພາບ. 27ຂໍຊົງລະນຶກເຖິງຜູ້ຮັບໃຊ້ຂອງພຣະອົງ
ຄື ອັບຣາຮາມ ອີຊາກ ແລະຢາໂຄບ ຢ່າຊົງສົນພຣະໄທໃນຄວາມດື້ດ້ານ ຄວາມຊົ່ວຮ້າຍ ແລະ
ຄວາມບາບຂອງປະຊາຊົນນີ້. 28ເພາະຢ້ານຊາວ ເອຢິບ ເວົ້າວ່າ, “ພຣະອົງບໍ່ສາມາດພາພວກ
ເຫລົ່ານີ້ໄປຍັງແຜ່ນດິນທີ່ຊົງສັນຍາຈະໃຫ້ ແຕ່ຊົງພາພວກເຂົາໄປຕາຍໃນຖິ່ນແຫ້ງແລ້ງກັນດານ
ຍ້ອນວ່າຊົງກຽດຊັງພວກເຂົາ.” 29ເພາະຄົນເຫລົ່ານີ້ແມ່ນໄພ່ພົນພິເສດຂອງພຣະອົງ ຊຶ່ງພຣະອົງ
ຊົງນຳອອກມາຈາກ ເອຢິບ ດ້ວຍກຳລັງ ແລະລິດທານຸພາບອັນຍິ່ງໃຫຍ່.

# ບົດທີ 10

## ປະຊາຊົນບໍ່ເຊື່ອຟັງພຣະຜູ້ເປັນເຈົ້າ

1ຕໍ່ມາ ພຣະຜູ້ເປັນເຈົ້າ ຊົງບອກຂ້າພະເຈົ້າວ່າ, “ຈົ່ງຕັດເອົາຫີນສອງແຜ່ນໃຫ້ຄືເກົ່າ ແລະ
ເຮັດຫີບໄມ້ສຳລັບໃສ່ດ້ວຍ ແລ້ວນຳຂຶ້ນມາຫາເຮົາເທິງພູ. 2ເຮົາຈະຈາລຶກຖ້ອຍຄຳໃສ່ຄືກັບແຜ່ນ
ເກົ່າທີ່ແຕກໄປແລ້ວນັ້ນໃຫ້ເຈົ້າອີກ ແລ້ວໃຫ້ຮັກສາໄວ້ໃນຫີບໄມ້ນັ້ນ.” 3ດັ່ງນັ້ນ ຂ້າພະເຈົ້າຈຶ່ງ
ເຮັດຫີບດ້ວຍໄມ້ກະຖິນເທດ ແລະໄດ້ເອົາແຜ່ນຫີນໃໝ່ສອງແຜ່ນຖືຂຶ້ນໄປເທິງພູ. 4ແລ້ວ ພຣະ-
ຜູ້ເປັນເຈົ້າ ໄດ້ຊົງຈາລຶກຖ້ອຍຄຳຄືກັບເທື່ອກ່ອນໃສ່ໃນຫີນສອງແຜ່ນນີ້ ຖ້ອຍຄຳທີ່ຊົງຈາລຶກໃສ່
ນີ້ແມ່ນພຣະບັນຍັດສິບປະການ ເທື່ອທີສອງ ຊຶ່ງພຣະອົງໄດ້ຊົງປະທານໃຫ້ພວກທ່ານ ເມື່ອຊົງ
ກ່າວອອກມາຈາກໄຟ ໃນມື້ທີ່ທ່ານທັງຫລາຍໄດ້ຊຸມນຸມກັນຢູ່ເທິງພູນັ້ນ ພຣະຜູ້ເປັນເຈົ້າ ໄດ້ຊົງ
ປະທານແຜ່ນຫີນນັ້ນໃຫ້ຂ້າພະເຈົ້າ. 5ຂ້າພະເຈົ້າຈຶ່ງໄດ້ກັບລົງມາຈາກພູ ແລ້ວກໍມ້ຽນແຜ່ນຫີນໄວ້

ໃນຫີບທີ່ເຮັດຂຶ້ນຕາມພຣະອົງຊົງສັ່ງ ແຜ່ນຫີນນັ້ນກໍຍັງຢູ່ໃນຫີບສືບຕໍ່ມາ.
6ຊາວ ອິສຣາເອນ ໄດ້ອອກຈາກນ້ຳສ້າງຂອງ ເບເນ-ຢາອາການ ເມື່ອມາເຖິງ ໂມເສຣາ ອາ-
ໂຣນ ກໍສິ້ນຊີວິດ ພວກເຂົາຈຶ່ງໄດ້ຝັງສົບເພິ່ນໄວ້ທີ່ນັ້ນ ແມ່ນ ເອເລອາຊາ ຜູ້ເປັນລູກຊາຍໄດ້ປະ-
ຕິບັດໜ້າທີ່ປະໂລຫິດແທນເພິ່ນ. 7ພວກເຂົາໄດ້ອອກຈາກທີ່ນັ້ນມາເຖິງ ກຸດໂກດາ ແລ້ວໄດ້ໄປ
ຍັງ ໂຢດບາທາ ຄືດິນແດນທີ່ມີນ້ຳຫລາຍ. 8ດັ່ງນັ້ນ ພຣະຜູ້ເປັນເຈົ້າ ຈຶ່ງໄດ້ແຕ່ງຕັ້ງໃຫ້ພວກຄົນ
ຕະກູນ ເລວີ ເບິ່ງແຍງຫີບຄຳໝັ້ນສັນຍາ ໃຫ້ເປັນປະໂລຫິດຮັບໃຊ້ພຣະອົງ ແລະ ໃຫ້ອຳນວຍ
ພອນໃນພຣະນາມຂອງພຣະອົງສືບຕໍ່ມາຈົນເຖິງທຸກມື້ນີ້. 9ດ້ວຍເຫດນີ້ ຕະກູນ ເລວີ ຈຶ່ງບໍ່ໄດ້ຮັບ
ສ່ວນມໍລະດົກຄືກັບຕະກູນອື່ນໆ ພວກເຂົາໄດ້ແຕ່ຮັບໃຊ້ເປັນປະໂລຫິດເທົ່ານັ້ນ ໂດຍມີພຣະຜູ້-
ເປັນເຈົ້າ ເປັນມໍລະດົກຂອງພວກເຂົາ ເໝືອນດັ່ງ ພຣະຜູ້ເປັນເຈົ້າ ຂອງທ່ານທັງຫລາຍໄດ້ຊົງສັນ-
ຍາໄວ້. 10ຂ້າພະເຈົ້າໄດ້ພັກຢູ່ເທິງພູສີ່ສິບມື້ສີ່ສິບຄືນຄືກັບເທື່ອກ່ອນໆ ພຣະຜູ້ເປັນເຈົ້າ ກໍຊົງຟັງ
ຂ້າພະເຈົ້າອີກເທື່ອໜຶ່ງ ແລະບໍ່ຊົງທຳລາຍພວກທ່ານ. 11ແລ້ວພຣະອົງໄດ້ຊົງບອກໃຫ້ຂ້າພະເຈົ້າ
ນຳພາພວກທ່ານເຂົ້າໄປຍຶດເອົາແຜ່ນດິນທີ່ຊົງສັນຍາວ່າ ຈະໃຫ້ບັນພະບູລຸດຂອງທ່ານທັງຫລາຍ
ນັ້ນ.

## ພຣະເຈົ້າຊົງປະທານພຣະບັນຍັດແກ່ໂມເຊອີກ

12ຊາວ ອິສຣາເອນ ເອີຍ ບັດນີ້ ຈົ່ງຟັງສິ່ງທີ່ ພຣະຜູ້ເປັນເຈົ້າ ຂອງພວກທ່ານ ຕ້ອງການໃຫ້
ທ່ານທັງຫລາຍເຮັດ ຄືໃຫ້ຢຳເກງ ພຣະຜູ້ເປັນເຈົ້າ ແລະເຮັດທຸກສິ່ງຕາມທີ່ພຣະອົງຊົງບອກ ໃຫ້
ຮັກ ແລະຮັບໃຊ້ພຣະອົງຈົນສຸດຈິດສຸດໃຈ. 13ໃຫ້ປະພຶດຕາມຄຳສັ່ງທັງປວງຂອງພຣະອົງ ຊຶ່ງ
ຂ້າພະເຈົ້າກຳລັງບອກພວກທ່ານໃນມື້ນີ້ ເພື່ອປະໂຫຍດຂອງທ່ານທັງຫລາຍ. 14ເພາະວ່າສະ-
ຫວັນທີ່ສູງສຸດເປັນຂອງພຣະອົງ ໂລກ ແລະທຸກໆ ສິ່ງໃນໂລກກໍເປັນຂອງພຣະອົງເໝືອນກັນ
ແຕ່ ພຣະຜູ້ເປັນເຈົ້າ ຊົງຮັກບັນພະບູລຸດຂອງພວກທ່ານຫລາຍທີ່ສຸດ. 15ດ້ວຍເຫດນັ້ນ ພຣະອົງ
ຈຶ່ງຊົງເລືອກເອົາພວກທ່ານໃຫ້ໄດ້ເປັນຊົນຊາດພິເສດຂອງພຣະອົງ ດີກວ່າເອົາຊົນຊາດອື່ນ ທຸກ
ມື້ນີ້ພຣະອົງກໍຍັງຮັກ ແລະເລືອກເອົາພວກທ່ານຢູ່. 16ແຕ່ບັດນີ້ເປັນຕົ້ນໄປ ຈົ່ງເຊື່ອຟັງ ພຣະຜູ້-
ເປັນເຈົ້າ ແລະເຊົາດື້ດ້ານເສຍ. 17ພຣະຜູ້ເປັນເຈົ້າ ຂອງພວກທ່ານຊົງຍິ່ງໃຫຍ່ກວ່າພະ ແລະ
ເຈົ້ານາຍທັງປວງ ຊົງເປັນ ພຣະເຈົ້າ ອົງຍິ່ງໃຫຍ່ ມີລິດທານຸພາບ ແລະໜ້າຢຳເກງ ພຣະອົງບໍ່
ຊົງເຫັນແກ່ໜ້າ ແລະສິນຈ້າງຮາງວັນໃດໆ. 18ຊົງໃຫ້ຄວາມເປັນທຳແກ່ລູກກຳພ້າ ແລະພວກ
ຍິງແມ່ໝ້າຍ ຊົງຮັກຄົນຕ່າງດ້າວທີ່ຢູ່ນຳພວກເຮົາ ຊົງປະທານອາຫານ ແລະເຄື່ອງນຸ່ງຫົ່ມໃຫ້
ແກ່ພວກເຂົາ. 19ດ້ວຍເຫດນັ້ນ ພວກທ່ານຈົ່ງຮັກແພງຄົນຕ່າງດ້າວ ເພາະວ່າ ພວກທ່ານກໍເຄີຍ
ເປັນ ຄົນ ຕ່າງ ດ້າວ ມາ ແລ້ວ ໃນ ປະເທດ ເອຢິບ. 20ຈົ່ງ ຢຳ ເກງ ພຣະຜູ້ເປັນເຈົ້າ ຂອງ ພວກທ່ານ
ແລະຂາບໄຫວ້ແຕ່ພຣະອົງ ຈົ່ງສັດຊື່ຕໍ່ພຣະອົງ ແລະຈົ່ງສາບານແຕ່ໃນພຣະນາມຂອງພຣະອົງ.
21ຈົ່ງສັນລະເສີນພຣະອົງຜູ້ຊົງເປັນ ພຣະເຈົ້າ ຂອງທ່ານທັງຫລາຍ ແລະພວກທ່ານກໍໄດ້ເຫັນການ
ກະທຳອັນຍິ່ງໃຫຍ່ ແລະໜ້າຢ້ານ ຊຶ່ງພຣະອົງຊົງເຮັດຕໍ່ໜ້າຕໍ່ຕາພວກທ່ານເອງແລ້ວ. 22ເມື່ອ
ບັນພະບູລຸດຂອງພວກທ່ານໄປຍັງປະເທດ ເອຢິບ ນັ້ນ ພວກເຂົາມີພຽງເຈັດສິບຄົນເທົ່ານັ້ນ ແຕ່
ບັດນີ້ ພຣະຜູ້ເປັນເຈົ້າ ຂອງພວກທ່ານ ໄດ້ເຮັດໃຫ້ພວກທ່ານມີຫລາຍຂຶ້ນເໝືອນດັ່ງດວງດາວໃນ

ທ້ອງຟ້າ.

# ບົດທີ 11

## ສິ່ງທີ່ພຣະເຈົ້າຊົງຕ້ອງການ

1ຈົ່ງຮັກ ພຣະຜູ້ເປັນເຈົ້າ ຂອງທ່ານ ແລະປະຕິບັດຕາມຂໍ້ຄຳສັ່ງທັງໝົດຂອງພຣະອົງສະເໝີ.
2-3ຈົ່ງຈື່ໄວ້ວ່າ ພວກທ່ານໄດ້ຮຽນຮູ້ເລື່ອງ ພຣະຜູ້ເປັນເຈົ້າ ດ້ວຍເຫັນການກະທຳຂອງພຣະອົງ ບໍ່
ແມ່ນລູກຫລານຂອງພວກທ່ານໄດ້ເຫັນ ເຫດການ ເຫລົ່ານີ້ ແຕ່ແມ່ນພວກທ່ານໄດ້ເຫັນຄວາມຍິ່ງ
ໃຫຍ່ ລິດອຳນາດ ການອັດສະຈັນຂອງ ພຣະຜູ້ເປັນເຈົ້າ ໄດ້ເຫັນພຣະອົງຊົງເຮັດຕໍ່ກະສັດ ເອ-
ຢິບ ແລະຕໍ່ປະເທດຂອງເພິ່ນ. 4ເມື່ອກອງທັບ ເອຢິບ ໄລ່ຕິດຕາມມາ ພວກທ່ານກໍໄດ້ເຫັນ ພຣະຜູ້-
ເປັນເຈົ້າ ຊົງ ເຮັດໃຫ້ນ້ຳທະເລແດງໄຫລຖ້ວມກອງທັບ ພ້ອມທັງຝູງມ້າ ແລະລົດຮົບຂອງ ເອຢິບ
ຈົມໝົດກ້ຽງ. 5ພວກທ່ານຮູ້ສິ່ງທີ່ ພຣະຜູ້ເປັນເຈົ້າ ໄດ້ຊົງ ເຮັດຕໍ່ພວກທ່ານ ໃນຖິ່ນ ແຫ້ງແລ້ງກັນ-
ດານ ກ່ອນມາຮອດບ່ອນນີ້ແລ້ວ. 6ຈົ່ງລະນຶກເຖິງສິ່ງທີ່ພຣະອົງໄດ້ຊົງເຮັດຕໍ່ ດາທານ ກັບ ອາບີ-
ຣາມ ທັງສອງຄົນນີ້ເປັນລູກຊາຍຂອງ ເອລີອາບ ແຫ່ງຕະກຸນ ຣູເບັນ ຄືພຣະອົງຊົງໃຫ້ແຜ່ນດິນ
ຍະອອກກືນກິນພວກເຂົາລົງໄປ ພ້ອມທັງຄອບຄົວ ຕູບຜ້າເຕັນ ພວກຄົນໃຊ້ ແລະສັດລ້ຽງທັງ
ໝົດ. 7ພະລາຊະກິດອັນຍິ່ງໃຫຍ່ທີ່ ພຣະຜູ້ເປັນເຈົ້າ ໄດ້ຊົງກະທຳນີ້ ພວກທ່ານກໍໄດ້ເຫັນກັບຕາ-
ມາແລ້ວ.

## ຄວາມຍິ່ງໃຫຍ່ຂອງພຣະຜູ້ເປັນເຈົ້າ

8ຈົ່ງເຮັດຕາມທຸກໆ ສິ່ງທີ່ຂ້າພະເຈົ້າໄດ້ບອກທ່ານໃນມື້ນີ້ ພວກທ່ານຈຶ່ງຈະສາມາດເຂົ້າໄປ
ຍຶດຄອງເອົາແຜ່ນດິນທີ່ກຳລັງເຂົ້າໄປນັ້ນ. 9ແລະຈະມີຊີວິດໝັ້ນຍືນຢູ່ໃນແຜ່ນດິນທີ່ອຸດົມສົມບູນ
ຊຶ່ງ ພຣະຜູ້ເປັນເຈົ້າ ໄດ້ຊົງສັນຍາວ່າ ຈະຍົກໃຫ້ບັນພະບູລຸດຂອງພວກທ່ານ ກັບເຊື້ອສາຍຂອງ
ພວກເຂົາ. 10ແຜ່ນດິນທີ່ພວກທ່ານກຳລັງຈະເຂົ້າຍຶດຄອງນັ້ນ ບໍ່ຄືແຜ່ນດິນ ເອຢິບ ທີ່ພວກທ່ານ
ໄດ້ເຄີຍອາໄສຢູ່ແຕ່ກ່ອນ ຢູ່ທີ່ນັ້ນ ເມື່ອພວກທ່ານປູກເຂົ້າຕ້ອງເຮັດວຽກໜັກເພື່ອປ້ານຄັນຄູກັ້ນ
ນ້ຳໄວ້. 11ແຕ່ແຜ່ນດິນທີ່ພວກທ່ານກຳລັງຈະເຂົ້າໄປນີ້ ເປັນພູ ແລະທົ່ງ ຈະມີຝົນຕົກລົງຫົດໃຫ້.
12ພຣະຜູ້ເປັນເຈົ້າ ຂອງ ພວກ ທ່ານ ຊົງ ເບິ່ງແຍງ ແລະ ເຝົ້າຮັກສາທົ່ວ ແຜ່ນດິນ ນີ້ຕະຫລອດປີ.
13ດ້ວຍເຫດນັ້ນ ຈົ່ງເຮັດຕາມຂໍ້ຄຳສັ່ງທີ່ຂ້າພະເຈົ້າໄດ້ບອກທ່ານໃນມື້ນີ້ ຄືໃຫ້ຮັກ ພຣະຜູ້ເປັນເຈົ້າ
ຂອງພວກທ່ານ ແລະບົວລະບັດພຣະອົງດ້ວຍສຸດຈິດສຸດໃຈ. 14ຖ້າພວກທ່ານເຮັດໄດ້ຕາມນີ້
ພຣະອົງຈະຊົງໃຫ້ຝົນຕົກລົງມາເທິງແຜ່ນດິນຂອງພວກທ່ານຖືກຕ້ອງຕາມລະດູການ ເພື່ອໃຫ້ໄດ້
ເຂົ້າກິນ ໄດ້ໝາກອະງຸ່ນເຮັດເຫລົ້າ ໄດ້ໝາກກອກເທດເຮັດນ້ຳມັນ ແລະໄດ້ຫຍ້າໃຫ້ຝູງສັດກິນ.
15ແລ້ວພວກທ່ານກໍຈະມີອາຫານກິນຕາມຄວາມຕ້ອງການ.

16ຈົ່ງລະວັງຢ່າໃຫ້ພວກເຂົານຳພາໄປໃນທາງທີ່ຜິດ ເພາະຢ້ານວ່າ ພວກທ່ານຈະປະຖິ້ມ
ພຣະຜູ້ເປັນເຈົ້າ ໄປຂາບໄຫວ້ ແລະບົວລະບັດພະອື່ນ. 17ຖ້າຫາກເຮັດດັ່ງກ່າວມານີ້ ພຣະຜູ້-
ເປັນເຈົ້າ ຈະຊົງພຣະພິໂລດພວກທ່ານ ຈະບໍ່ຊົງໃຫ້ຝົນຕົກລົງມາເທິງແຜ່ນດິນຂອງພວກທ່ານ
ແລ້ວແຜ່ນດິນຈະແຫ້ງ ພືດຜົນຈະບໍ່ເກີດ ໃນບໍ່ເທິງ ພວກທ່ານກໍຈະຕາຍຈາກແຜ່ນດິນດີໆ ທີ່

ພຣະອົງໄດ້ຊົງປະທານໃຫ້ນີ້. 18ຈົ່ງໃສ່ຈິດໃຈຈົດຈຳເອົາຂໍ້ຄຳສັ່ງເຫລົ່ານີ້ ໃຫ້ຕິດມັນໄວ້ຢູ່ແຂນ
ແລະເທິງໜ້າຜາກເພື່ອເປັນສິ່ງເຕືອນໃຈ. 19ໃຫ້ບອກລູກຫລານຮຽນເອົາ ແລະເມື່ອທ່ານຢູ່ໃນ
ເຮືອນຫລືອອກໜີໄປກໍດີ ເມື່ອທ່ານເຮັດວຽກ ຫລືຢຸດພັກກໍດີໃຫ້ທ່ອງຈຳຄຳສັ່ງນີ້. 20ພ້ອມທັງໃຫ້
ຂຽນມັນໄວ້ຕາມປະຕູເຮືອນຂອງທ່ານດ້ວຍ. 21ແລ້ວທ່ານກັບພວກລູກຫລານຈະມີອາຍຸໝັ້ນຍືນຢູ່
ໃນແຜ່ນດິນທີ່ພຣະຜູ້ເປັນເຈົ້າໄດ້ຊົງສັນຍາວ່າຈະມອບໃຫ້ບັນພະບູລຸດຂອງທ່ານ ແລະພວກ
ທ່ານຈະຢູ່ໃນທີ່ນັ້ນຊົ່ວຟ້າດິນສະຫລາຍ. 22ຈົ່ງເຮັດຕາມຂໍ້ຄຳສັ່ງທີ່ຂ້າພະເຈົ້າໄດ້ບອກພວກທ່ານ
ນີ້ດ້ວຍຄວາມສັດຊື່ ຄືໃຫ້ຮັກພຣະຜູ້ເປັນເຈົ້າຂອງທ່ານ ເຮັດຕາມທຸກໆ ສິ່ງທີ່ພຣະອົງຊົງບອກ
ແລະເຊື່ອວາງໃຈໃນພຣະອົງ. 23ແລ້ວພຣະອົງຈະຊົງຂັບໄລ່ຊົນຊາດເຫລົ່ານີ້ທັງໝົດໃຫ້ໜີໄປ
ຈາກທ່ານ ແລະພວກທ່ານຈະເຂົ້າຍຶດຄອງແຜ່ນດິນຂອງຊົນຊາດທີ່ໃຫຍ່ ແລະມີກຳລັງກວ່າ
ທ່ານ. 24ດິນທຸກໆ ບ່ອນທີ່ທ່ານຢຽບຍ່າງໄປຈະເປັນຂອງທ່ານ ເຂດແດນຂອງພວກທ່ານຈະ
ເລີ່ມຕົ້ນແຕ່ຖິ່ນແຫ້ງແລ້ງກັນດານທາງທິດໃຕ້ ໄປຈົນຮອດພູເລບານອນທາງທິດເໜືອ ສ່ວນ
ທາງທິດຕາເວັນອອກກໍຈະເລີ່ມຕົ້ນແຕ່ແມ່ນ້ຳເອຟຣາດ ໄປຈົນຮອດທະເລເມດິແຕຣາເນທາງ
ທິດຕາເວັນຕົກ. 25ຈະບໍ່ມີໃຜກ້າຂັດຂວາງທ່ານໄດ້ ບໍ່ວ່າທ່ານຈະຢຽບຍ່າງໄປບ່ອນໃດໃນແຜ່ນ-
ດິນນັ້ນ ພຣະຜູ້ເປັນເຈົ້າຈະຊົງເຮັດໃຫ້ປະຊາຊົນຢ້ານກົວທ່ານຕາມທີ່ຊົງສັນຍາໄວ້.

26ມື້ນີ້ ຂ້າພະເຈົ້າຈະໃຫ້ທ່ານເລືອກເອົາລະຫວ່າງຄຳອວຍພອນກັບຄຳສາບແຊ່ງ. 27ຖ້າພວກ
ທ່ານຫາກເຮັດຕາມຂໍ້ຄຳສັ່ງຂອງພຣະຜູ້ເປັນເຈົ້າ ຊຶ່ງຂ້າພະເຈົ້າຈະບອກທ່ານມື້ນີ້ ພວກທ່ານກໍ
ຈະໄດ້ຮັບພອນ. 28ຖ້າວ່າບໍ່ເຮັດຕາມຂໍ້ຄຳສັ່ງເຫລົ່ານີ້ ແຕ່ຫັນໜີໄປຂາບໄຫວ້ພະອື່ນທີ່ບໍ່ເຄີຍ
ຂາບໄຫວ້ມາກ່ອນ ພວກທ່ານກໍຈະຖືກສາບແຊ່ງ. 29ເມື່ອພຣະຜູ້ເປັນເຈົ້າຊົງນຳພວກທ່ານເຂົ້າ
ໄປຍຶດຄອງເອົາແຜ່ນດິນນັ້ນ ຈົ່ງປະກາດຄຳອວຍພອນນີ້ຕັ້ງແຕ່ພູເກຣິຊິມ ແລະປະກາດຄຳ
ສາບແຊ່ງແຕ່ພູເອບານ. 30ພູສອງໜ່ວຍນີ້ຢູ່ທາງທິດຕາເວັນຕົກຂອງແມ່ນ້ຳຢໍແດນ ໃນອານາ-
ເຂດຂອງຊາວການາອານ ຊຶ່ງອາໄສຢູ່ໃນຮ່ອມພູຢໍແດນທາງທິດຕາເວັນຕົກ ໃກ້ໆ ກັບຕົ້ນໄມ້
ສັກສິດທີ່ເມືອງກິນການ. 31-32ພວກທ່ານກຳລັງຈະຂ້າມແມ່ນ້ຳຢໍແດນໄປຍຶດຄອງແຜ່ນດິນທີ່
ພຣະຜູ້ເປັນເຈົ້າຊົງປະທານໃຫ້ ເມື່ອເຂົ້າຍຶດຄອງ ແລະອາໄສຢູ່ທີ່ນັ້ນແລ້ວ ພວກທ່ານຈົ່ງເຮັດ
ຕາມຂໍ້ຄຳສັ່ງທີ່ຂ້າພະເຈົ້າຈະບອກພວກທ່ານໃນມື້ນີ້.

# ບົດທີ 12

## ພຣະພອນໃນແຜ່ນດິນທີ່ຊົງສັນຍາໄວ້

1ຕໍ່ໄປນີ້ແມ່ນຄຳສັ່ງຂອງພຣະຜູ້ເປັນເຈົ້າ ແຫ່ງບັນພະບູລຸດຂອງທ່ານທັງຫລາຍ ພວກທ່ານ
ຕ້ອງປະຕິບັດຕາມຂໍ້ຄຳສັ່ງນີ້ຕະຫລອດຊີວິດໃນແຜ່ນດິນທີ່ຈະຊົງປະທານໃຫ້. 2ຢູ່ໃນແຜ່ນດິນນີ້
ຈົ່ງທຳລາຍບ່ອນທີ່ປະຊາຊົນຂາບໄຫວ້ພະຂອງພວກເຂົາຖິ້ມທັງໝົດ ຄືເທິງພູໃຫຍ່ ພູນ້ອຍແລະ
ກ້ອງຕົ້ນໄມ້ຂຽວສົດທຸກຕົ້ນ. 3ຈົ່ງມ້າງແທ່ນບູຊາ ທັບເສົາຫີນສັກສິດຂອງພວກເຂົາໃຫ້ແຕກມຸ່ນ
ເຜົາຫລັກສັກສິດ ແລະທຳລາຍຮູບເຄົາລົບຖິ້ມ ເພື່ອບໍ່ໃຫ້ພວກເຂົາຂາບໄຫວ້ໃນສະຖານທີ່
ເຫລົ່ານັ້ນອີກ. 4ແລະຢ່າຂາບໄຫວ້ພຣະຜູ້ເປັນເຈົ້າຂອງພວກທ່ານ ຕາມແບບຢ່າງປະຊາຊົນ

ເຫລົ່ານີ້ຂາບໄຫວ້ພະຂອງພວກເຂົາ. 5ພຣະຜູ້ເປັນເຈົ້າຈະຊົງເລືອກເອົາບ່ອນໜຶ່ງໃນເຂດແດນ
ແຫ່ງຕະກູນຂອງພວກທ່ານ ເພື່ອປະຊາຊົນຈະໄດ້ມາຂາບໄຫວ້ພຣະອົງຢູ່ທີ່ນີ້. 6ໃນທີ່ນັ້ນ ພວກ
ທ່ານຕ້ອງເຜົາສັດຖວາຍບູຊາ ແລະຖວາຍເຄື່ອງບູຊາອື່ນໆ ເຊັ່ນໜຶ່ງສ່ວນສິບຂອງຊັບສິ່ງຂອງ
ຕ່າງໆ ຂອງຕົນ ເຄື່ອງທີ່ສັນຍາວ່າຈະຖວາຍແດ່ພຣະຜູ້ເປັນເຈົ້າ ເຄື່ອງຖວາຍຕາມໃຈສະໝັກ
ລູກກົກຂອງງົວແລະແກະທຸກໆໂຕ. 7ໃຫ້ພວກທ່ານກັບຄອບຄົວກິນຢູ່ທີ່ນັ້ນຊ້ອງພຣະພັກພຣະ-
ຜູ້ເປັນເຈົ້າ ແລະໃຫ້ມີຄວາມສຸກມ່ວນຊື່ນຕາມພຣະພອນທີ່ພຣະຜູ້ເປັນເຈົ້າໄດ້ຊົງປະທານໃຫ້
ນັ້ນ. 8ເມື່ອເຖິງເວລານັ້ນ ພວກທ່ານບໍ່ຈຳເປັນທີ່ຈະຕ້ອງທຸ້ມເທກຳລັງຄືທີ່ເຄີຍເຮັດມາ ເພາະ
ດຽວນີ້ພວກທ່ານທຸກຄົນກຳລັງເຮັດຕາມຄວາມພໍໃຈຂອງຕົນ. 9ຍ້ອນວ່າຍັງບໍ່ທັນໄດ້ເຂົ້າໄປເຖິງ
ດິນແດນທີ່ພຣະຜູ້ເປັນເຈົ້າຈະຊົງປະທານໃຫ້ ຢູ່ທີ່ນັ້ນພວກທ່ານຈະມີຊີວິດຢູ່ດ້ວຍຄວາມສະ-
ຫງົບສຸກ. 10ເມື່ອຂ້າມແມ່ນ້ຳຢໍແດນໄປ ພຣະອົງຈະຄຸ້ມຄອງຮັກສາພວກທ່ານໃຫ້ພົ້ນຈາກສັດຕູ
ເພື່ອໃຫ້ຊີວິດຂອງພວກເຈົ້າຢູ່ຢ່າງສະຫງົບສຸກ. 11ແລະຈະຊົງເລືອກເອົາບ່ອນໜຶ່ງໃຫ້ເປັນບ່ອນ
ຂາບໄຫວ້ພຣະອົງ ແລ້ວໃຫ້ພວກທ່ານນຳເອົາທຸກສິ່ງທີ່ຂ້າພະເຈົ້າສັ່ງໄວ້ໄປຖວາຍພຣະອົງຢູ່ທີ່
ນັ້ນ ຄືສັດສຳລັບເຜົາບູຊາ ແລະເຄື່ອງບູຊາອື່ນໆ ເຊັ່ນໜຶ່ງສ່ວນສິບຂອງສິ່ງຂອງຕ່າງໆ ຂອງ
ຕົນ ແລະເຄື່ອງບູຊາທີ່ທ່ານໄດ້ສັນຍາວ່າຈະຖວາຍແດ່ພຣະຜູ້ເປັນເຈົ້າ. 12ແລ້ວພວກທ່ານພ້ອມ
ທັງລູກ ຄົນໃຊ້ ແລະຄົນເລວີທີ່ອາໄສຢູ່ໃນເມືອງ ຈົ່ງມ່ວນຊື່ນຍິນດີຊ້ອງພຣະພັກພຣະຜູ້ເປັນ-
ເຈົ້າ ໃຫ້ຈື່ໄວ້ວ່າ ຄົນເລວີນັ້ນຈະບໍ່ມີແຜ່ນດິນຢູ່ເປັນຂອງຕົນເອງ. 13ພວກທ່ານຢ່າຖວາຍເຄື່ອງ
ບູຊາໃນບ່ອນທີ່ຕົນມັກ ໃຫ້ຖວາຍຢູ່ບ່ອນທີ່ພຣະຜູ້ເປັນເຈົ້າຈະຊົງເລືອກໃນເຂດແດນຕະກູນໜຶ່ງ
ຂອງພວກທ່ານເທົ່ານັ້ນ. 14ມີແຕ່ບ່ອນດັ່ງກ່າວເທົ່ານັ້ນ ທີ່ທ່ານສາມາດຖວາຍເຄື່ອງເຜົາບູຊາໄດ້
ແລະຈົ່ງເຮັດສິ່ງອື່ນໆ ທັງໝົດຕາມທີ່ຂ້າພະເຈົ້າໄດ້ສັ່ງໄວ້.

15ອີກຢ່າງໜຶ່ງ ພວກທ່ານສາມາດກິນສັດຂອງຕົນເອງບ່ອນໃດກໍໄດ້ ຈະກິນໜ້ອຍຫລາຍ
ປານໃດກໍໄດ້ຕາມທີ່ພຣະຜູ້ເປັນເຈົ້າໄດ້ຊົງປະທານໃຫ້ ກິນໄດ້ທັງຜູ້ທີ່ສະອາດ ແລະຜູ້ມີມົນທິນ
ຢ່າງດຽວກັນກັບກິນຊີ້ນກວາງແລະຊີ້ນຟານ. 16ແຕ່ຈະຕ້ອງບໍ່ກິນເລືອດຂອງມັນ ໃຫ້ເທລົງດິນຄື
ກັບເທນ້ຳເສຍ. 17ຢ່າກິນຂອງທີ່ໄດ້ມາຈາກໜຶ່ງສ່ວນສິບໃນບ້ານເຮືອນຂອງຕົນ ຄືເຂົ້າ ເຫລົ້າ
ອະງຸ່ນ ຫລືນ້ຳມັນໝາກກອກເທດ ສິ່ງໃດທີ່ຖວາຍພຣະຜູ້ເປັນເຈົ້າຢູ່ທີ່ນັ້ນບໍ່ຕ້ອງກິນ ລູກກົກ
ຂອງງົວ ແລະແກະພ້ອມທັງສິ່ງຂອງທີ່ໄດ້ສັນຍາໄວ້ເຄື່ອງຖວາຍຕາມໃຈສະໝັກ ຫລືເຄື່ອງ
ຖວາຍອື່ນໆ ຢ່າງໃດຢ່າງໜຶ່ງ. 18ໃຫ້ພວກທ່ານພ້ອມທັງລູກກັບຄົນໃຊ້ ແລະຄົນເລວີທີ່ອາໄສຢູ່
ໃນບ້ານເມືອງ ກິນເຄື່ອງຖວາຍເຫລົ່ານີ້ຢູ່ໃນບ່ອນຂາບໄຫວ້ຊ້ອງພຣະພັກພຣະຜູ້ເປັນເຈົ້າ ຈົ່ງ
ກິນແລະມ່ວນຊື່ນເຖີ້ນ ຍ້ອນວ່າພຣະຜູ້ເປັນເຈົ້າຊົງປະທານຂອງດີໃຫ້ພວກທ່ານແລ້ວ. 19ແລະ
ຕາບໃດທີ່ພວກທ່ານຍັງອາໄສຢູ່ໃນແຜ່ນດິນຂອງຕົນນີ້ ຢ່າໄດ້ປະຖິ້ມຄົນເລວີ.

20ເມື່ອພຣະຜູ້ເປັນເຈົ້າຊົງຂະຫຍາຍເຂດແດນຂອງທ່ານຕາມທີ່ຊົງສັນຍາໄວ້ແລ້ວ ພວກທ່ານ
ຈະກິນຊີ້ນໄດ້ທຸກເວລາຕາມໃຈຢາກ. 21ຖ້າບ່ອນຂາບໄຫວ້ຫາກຢູ່ໄກເກີນໄປ ຈົ່ງເຮັດຕາມທີ່ຂ້າ-
ພະເຈົ້າໄດ້ສັ່ງໄວ້ ຄືໃຫ້ຂ້າງົວ ຫລືແກະທີ່ພຣະຜູ້ເປັນເຈົ້າປະທານໃຫ້ນັ້ນ ກິນຢູ່ເຮືອນຂອງຕົນ
ຕາມໃຈຢາກ ທັງຜູ້ສະອາດ ແລະຜູ້ທີ່ມີມົນທິນກໍກິນໄດ້ຄືກັນ. 22ຢ່າງດຽວກັນກັບກິນຊີ້ນກວາງ

ຫລືຊີ້ນຟານ. 23ແຕ່ເມື່ອທ່ານກິນຊີ້ນຂອງມັນ ຢ່າໄດ້ກິນເລືອດນຳ ເພາະວ່າຊີວິດນັ້ນຢູ່ໃນເລືອດ
ສະນັ້ນ ຢ່າໄດ້ກິນຊີວິດນຳກັນກັບຊີ້ນຂອງມັນ. 24-25ຢ່າໄດ້ກິນເລືອດ ໃຫ້ເທມັນລົງດິນຄືກັບເທ
ນໍ້າຖິ້ມ ຖ້າທ່ານບໍ່ກິນເລືອດ ພຣະຜູ້ເປັນເຈົ້າຈະຊົງພໍພຣະໄທ ແລະຄວາມຈະເລີນຮຸ່ງເຮືອງຈະ
ເກີດມີແກ່ພວກທ່ານ ແລະເຊື້ອສາຍທັງຫລາຍ. 26ແຕ່ວ່າຈົ່ງເອົາເຄື່ອງບູຊາ ແລະເຄື່ອງທີ່ສັນຍາ
ວ່າຈະຖວາຍພຣະຜູ້ເປັນເຈົ້າໄປຍັງບ່ອນຂາບໄຫວ້. 27ແລ້ວຖວາຍເຄື່ອງເຜົາບູຊາທັງໝົດ ແລະ
ເລືອດເທິງແທ່ນບູຊາຂອງພຣະຜູ້ເປັນເຈົ້າ ແລະໃຫ້ເທເລືອດສັດເຜົາບູຊາລົງເທິງແທ່ນ ແຕ່ຊີ້ນ
ນັ້ນໃຫ້ພວກທ່ານກິນສາ. 28ຂໍ້ຄຳສັ່ງທັງໝົດທີ່ຂ້າພະເຈົ້າບອກພວກທ່ານນີ້ ຈົ່ງເຮັດຕາມດ້ວຍ
ຄວາມເອົາໃຈໃສ່ ພວກທ່ານກັບເຊື້ອສາຍຂອງທ່ານກໍຈະຈະເລີນຮຸ່ງເຮືອງສືບໄປເປັນນິດ.

## ໃຫ້ມີສະຖານທີ່ນະມັດສະການພຽງແຫ່ງດຽວ

29ເມື່ອພວກທ່ານບຸກເຂົ້າໄປຍຶດຄອງແຜ່ນດິນ ຂອງຊົນຊາດທັງຫລາຍ ພຣະຜູ້ເປັນເຈົ້າຈະ
ຊົງທຳລາຍຊົນຊາດເຫລົ່ານັ້ນ ແລ້ວຈະຊົງໃຫ້ພວກທ່ານເປັນເຈົ້າຂອງອາໄສຢູ່ທີ່ນັ້ນ. 30ຫລັງ
ຈາກພຣະຜູ້ເປັນເຈົ້າຊົງທຳລາຍຊົນຊາດເຫລົ່ານີ້ແລ້ວ ພວກທ່ານຈົ່ງລະວັງ ຢ່າໄດ້ເຮັດຕາມ
ຫລັກຄຳສອນແຫ່ງສາດສະໜາຂອງພວກເຂົາ ເພາະວ່າການເຮັດຢ່າງນັ້ນເປັນໄພອັນຕະລາຍ
ຮ້າຍແຮງ ຢ່າສົນໃຈວ່າພວກເຂົາຈະຂາບໄຫວ້ພະຂອງພວກເຂົາຢ່າງໃດ ເພາະຢ້ານວ່າພວກ
ທ່ານຈະເອົາແບບຢ່າງພວກເຂົາ. 31ສະນັ້ນ ຢ່າຂາບໄຫວ້ພຣະຜູ້ເປັນເຈົ້າຄືກັບພວກເຂົາຂາບ
ໄຫວ້ພະອື່ນ ເພາະວ່າໃນເວລາຂາບໄຫວ້ພະເຫລົ່ານັ້ນ ພວກເຂົາໄດ້ເຮັດໃຫ້ສິ່ງຂີ້ດຽດທີ່ພຣະຜູ້-
ເປັນເຈົ້າຊົງກຽດຊັງ ຄືພວກເຂົາເຜົາລູກຊາຍຍິງຂອງຕົນເທິງແທ່ນບູຊາ
32ທຸກໆ ສິ່ງທີ່ຂ້າພະເຈົ້າບອກພວກທ່ານນີ້ ຈົ່ງໄດ້ເຮັດຕາມທັງໝົດ ຢ່າເພີ່ມເຕີມ ຫລືຕັດ
ຖ້ອຍຄຳໃດໆອອກ.

# ບົດທີ 13

1ອາດຈະມີຜູ້ປະກາດພຣະທຳ ຫລືຜູ້ຝັນເຫັນເຫດການບອກໃຫ້ພວກທ່ານຂາບໄຫວ້ ແລະ
ບົວລະບັດພະທີ່ບໍ່ເຄີຍຂາບໄຫວ້ມາກ່ອນ. 2ບາງທີ ພວກເຂົາອາດເຮັດໃຫ້ມີໝາຍສຳຄັນ ຫລື
ການອັດສະຈັນເກີດຂຶ້ນ ເພື່ອໃຫ້ທ່ານເຊື່ອຟັງພວກເຂົາ ຖ້າຫາກວ່າເລື່ອງທີ່ພວກເຂົາເວົ້ານີ້ເກີດ
ຂຶ້ນແທ້ ກໍຢ່າເຊື່ອຟັງພວກເຂົາ. 3ພຣະຜູ້ເປັນເຈົ້າຈະຊົງໃຊ້ພວກເຂົາມາທົດລອງ ເພື່ອຈະຊົງຮູ້
ວ່າທ່ານຈະຮັກ ແລະນັບຖືພຣະອົງດ້ວຍສຸດຈິດສຸດໃຈຫລືບໍ່. 4ຈົ່ງຕິດຕາມພຣະຜູ້ເປັນເຈົ້າ ໃຫ້
ຢຳເກງ ເຊື່ອຟັງ ແລະເຮັດຕາມຂໍ້ຄຳສັ່ງຂອງພຣະອົງ ໃຫ້ຂາບໄຫວ້ ແລະສັດຊື່ຕໍ່ພຣະອົງ.
5ແຕ່ຜູ້ປະກາດພຣະທຳ ຫລືຜູ້ຝັນເຫັນເຫດການ ຜູ້ໃດບອກໃຫ້ທ່ານເປັນກະບົດຕໍ່ສູ້ພຣະຜູ້ເປັນ-
ເຈົ້າ ຜູ້ຊົງໂຜດເອົາພວກທ່ານອອກຈາກເອຢິບບ່ອນຕົກເປັນທາດ ລາວຜູ້ນັ້ນຈະຕ້ອງຖືກໂທດ
ເຖິງຕາຍ ຄົນແບບນີ້ເປັນຄົນຊົ່ວ ແລະຈະນຳພວກທ່ານອອກຈາກທາງແຫ່ງຊີວິດທີ່ພຣະຜູ້ເປັນ-
ເຈົ້າຊົງສັ່ງໃຫ້ດຳເນີນຕາມ ດັ່ງນັ້ນ ພວກເຂົາຈະຕ້ອງຖືກໂທດເຖິງຕາຍ ທ່ານຈະຕ້ອງກຳຈັດ
ຄວາມຊົ່ວໃຫ້ໝົດໄປ.
6ຖ້າວ່າອ້າຍນ້ອງລູກຊາຍຍິງ ເມຍຮັກ ຫລືເພື່ອນສະໜິດຂອງທ່ານຊັກຊວນຢ່າງລັບໆ ໃຫ້

ທ່ານຂາບໄຫວ້ພະອື່ນ ຄືພະທີ່ທ່ານເອງ ແລະພວກບັນພະບູລຸດບໍ່ເຄີຍຂາບໄຫວ້ມາກ່ອນ.
7ແລະບາງຄົນອາດຊັກຊວນທ່ານຂາບໄຫວ້ພະຂອງຊົນຊາດທີ່ຢູ່ອ້ອມຂ້າງ ຫລືຢູ່ຫ່າງໄກ. 8ແຕ່
ທ່ານຢ່າຍອມຕາມ ຫລືເຊື່ອຟັງ ຢ່າເມດຕາປານີ ແລະໃຫ້ການຄຸ້ມຄອງພວກເຂົາ. 9ແຕ່ໃຫ້ຂ້າ
ພວກເຂົາເສຍ ໂດຍໃຫ້ທ່ານລົງມືແກວ່ງກ້ອນຫີນໃສ່ພວກເຂົາກ່ອນ ແລ້ວຈຶ່ງໃຫ້ທຸກໆ ຄົນ
ແກວ່ງກ້ອນຫີນໃສ່ນຳກັນອີກ. 10ຈົ່ງແກວ່ງກ້ອນຫີນໃສ່ຈົນຕາຍ ເພາະວ່າພວກເຂົາພະຍາຍາມ
ເອົາທ່ານໜີຈາກ **ພຣະຜູ້ເປັນເຈົ້າ** ຜູ້ຊົງຊ່ອຍທ່ານອອກຈາກເອຢິບບ່ອນຕົກເປັນທາດ. 11ເມື່ອ
ຊາວອິສຣາເອນທັງປວງໄດ້ຍິນເລື່ອງນີ້ພວກເຂົາກໍຈະຢ້ານ ແລະຈະບໍ່ເຮັດຊົ່ວແບບນີ້ອີກ.”

12ຖ້າທ່ານທັງຫລາຍໄດ້ຍິນວ່າ ໃນຫົວເມືອງໜຶ່ງຫົວເມືອງໃດຊຶ່ງ **ພຣະຜູ້ເປັນເຈົ້າ ພຣະເຈົ້າ**
ຂອງທ່ານປະທານໃຫ້ທ່ານອາໄສຢູ່ນັ້ນ 13ມີບາງຄົນທີ່ເປັນຄົນອັນທະພານໄດ້ອອກໄປຈາກ
ທ່າມກາງທ່ານ ຊັກຊວນຊາວເມືອງນັ້ນວ່າ ‘ໃຫ້ເຮົາໄປບົວລະບັດພະອື່ນກັນເທາະ’ ຊຶ່ງເປັນພະ
ທີ່ທ່ານບໍ່ຮູ້ຈັກ 14ທ່ານທັງຫລາຍຈົ່ງສອບຖາມເບິ່ງຢ່າງຖີ່ຖ້ວນ ແລະຖາມເບິ່ງ ຖ້າເປັນຄວາມຈິງ
ແລະແນ່ນອນວ່າ ສິ່ງທີ່ໜ້າກຽດຊັງນັ້ນມີຄົນປະຕິບັດກັນຢູ່ໃນໝູ່ພວກທ່ານ 15ທ່ານຈົ່ງຂ້າຊາວ
ເມືອງນັ້ນດ້ວຍຄົມດາບ ທຳລາຍໃຫ້ໝົດດ້ວຍຄົມດາບຂອງທ່ານ ທັງຄົນທີ່ອາໄສໃນເມືອງນັ້ນ
ແລະຝູງສັດດ້ວຍ 16ທ່ານຈົ່ງເກັບເຄື່ອງຂອງທັງໝົດໃນເມືອງນັ້ນໄປກອງໄວ້ຢູ່ກາງຖະໜົນ
ແລະເຜົາເມືອງນັ້ນກັບບັນດາເຄື່ອງຂອງໃນເມືອງນັ້ນດ້ວຍໄຟ ເພື່ອເປັນເຄື່ອງບູຊາ **ພຣະຜູ້ເປັນ-
ເຈົ້າ ພຣະເຈົ້າ**ຂອງທ່ານ ໃຫ້ເມືອງນັ້ນຮ້າງຢູ່ເປັນນິດ ຢ່າສ້າງຂຶ້ນມາໃໝ່ອີກເລີຍ 17ຢ່າໃຫ້ຂອງ
ຕ້ອງຫ້າມນັ້ນມາຕິດພັນມືຂອງທ່ານ ເພື່ອວ່າ **ພຣະຜູ້ເປັນເຈົ້າ** ຈະຊົງຫັນຈາກພຣະພິໂລດຂອງ
ພຣະອົງ ແລະຊົງສະແດງພຣະກະລຸນາຕໍ່ທ່ານ ແລະຊົງເມດຕາທ່ານ ໃຫ້ທ່ານທະວີຫລາຍຂຶ້ນ
ດັ່ງທີ່ພຣະອົງຊົງປະຕິຍານໄວ້ກັບບັນພະບູລຸດຂອງພວກທ່ານນັ້ນ 18ເມື່ອທ່ານທັງຫລາຍເຊື່ອຟັງ
ພຣະສຸລະສຽງຂອງ **ພຣະຜູ້ເປັນເຈົ້າ ພຣະເຈົ້າ**ຂອງທ່ານ ຄືຮັກສາພຣະບັນຍັດທັງໝົດຂອງ
ພຣະອົງດັ່ງທີ່ຂ້າພະເຈົ້າສັ່ງທ່ານໄວ້ໃນມື້ນີ້ ແລະເຮັດສິ່ງທີ່ຖືກຕ້ອງຕາມສາຍພຣະເນດ **ພຣະຜູ້-
ເປັນເຈົ້າ ພຣະເຈົ້າ**ຂອງທ່ານ”

# ບົດທີ 14

## ຄຳຕັກເຕືອນບໍ່ໃຫ້ຂາບໄຫວ້ຮູບເຄົາລົບ

1“ທ່ານທັງຫລາຍເປັນລູກຂອງ **ພຣະຜູ້ເປັນເຈົ້າ ພຣະເຈົ້າ**ຂອງທ່ານ ທ່ານຢ່າປາດຊີ້ນຕົວເອງ
ຫລືແຖຫົວເພື່ອຄົນຕາຍ 2ເພາະວ່າທ່ານທັງຫລາຍເປັນຊົນຊາດບໍລິສຸດແດ່ **ພຣະຜູ້ເປັນເຈົ້າ
ພຣະເຈົ້າ**ຂອງທ່ານ ແລະ **ພຣະຜູ້ເປັນເຈົ້າ** ຊົງເລືອກຈາກປະຊາຊາດທັງຫລາຍທີ່ຢູ່ເທິງແຜ່ນດິນ
ໂລກໃຫ້ເປັນຊົນຊາດໃນກຳມະສິດຂອງພຣະອົງ 3ທ່ານທັງຫລາຍຢ່າກິນສິ່ງທີ່ໜ້າກຽດຊັງ 4ສັດ
ທີ່ກິນໄດ້ມີດັ່ງຕໍ່ໄປນີ້ ຄື ງົວ ແກະ ແບ້ 5ກວາງ ເຍືອງ ຟານ ແບ້ປ່າ ງົວປ່າ ແລະແກະປ່າ
6ທ່ານກິນສັດທຸກຊະນິດທີ່ແຍກກີບ ຄືກີບຜ່າອອກເປັນສອງ ແລະຄ້ຽວເອື້ອງໄດ້ 7ຢ່າງໃດກໍ
ຕາມ ໃນຈຳພວກສັດທັງຫລາຍທີ່ຄ້ຽວເອື້ອງຫລືມີກີບຜ່າ ທ່ານຢ່າກິນສັດຕໍ່ໄປນີ້ຄື ອູດ ກະຕ່າຍ
ໂຕຕຸ່ນ ເພາະວ່າສັດເຫລົ່ານີ້ຄ້ຽວເອື້ອງ ແຕ່ກີບບໍ່ຜ່າ ຈຶ່ງເປັນສັດທີ່ມີມົນທິນແກ່ທ່ານ 8ແລະໝູ

ດ້ວຍ ເພາະວ່າໝູມີກີບຜ່າ ແຕ່ບໍ່ຄ້ຽວເອື້ອງ ຈຶ່ງເປັນສັດທີ່ມີມົນທິນແກ່ທ່ານ ທ່ານຢ່າກິນຊີ້ນ
ຂອງມັນ ແລະຊາກສົບຂອງມັນທ່ານກໍຢ່າແຕະຕ້ອງ 9ໃນບັນດາສັດນໍ້າທັງໝົດ ທ່ານກິນສັດ
ເຫລົ່ານີ້ໄດ້ ຄື ສັດໃດໆທີ່ມີຄີ ແລະເກັດ ທ່ານກິນໄດ້ 10ແຕ່ສັດໃດໆທີ່ບໍ່ມີຄີ ແລະບໍ່ມີເກັດ
ທ່ານຢ່າກິນ ເປັນສັດທີ່ມີມົນທິນແກ່ທ່ານ 11ນົກສະອາດທຸກຊະນິດ ທ່ານກິນໄດ້ 12ແຕ່ນົກເຫລົ່າ
ນີ້ ທ່ານຢ່າກິນຄື ນົກອິນຊີ ນົກແຮ້ງ ນົກຈອກເທດ 13ນົກແຫລວຫາງຍາວ ນົກແຫລວດຳ ນົກ
ແຮ້ງຕາມຊະນິດຂອງມັນ 14ບັນດານົກກາຕາມຊະນິດຂອງມັນ 15ນົກເຄົ້າແມວ ນົກເຄົ້າ ນົກ
ນາງນວນ ນົກເຂົາຕາມຊະນິດຂອງມັນ 16ນົກເຄົ້ານ້ອຍ ນົກເຄົ້າໃຫຍ່ ນົກອໍຫລໍ 17ນົກກະທຸງ
ແຮ້ງ ແລະນົກການໍ້າ 18ນົກກະສາດຳ ນົກກະສາຕາມຊະນິດຂອງມັນ ນົກຫົວຂວານ ແລະເຈຍ
19ແມງໄມ້ມີປີກທຸກຊະນິດເປັນສັດທີ່ມີມົນທິນແກ່ທ່ານ ຢ່າກິນ 20ສັດມີປີກທີ່ສະອາດທຸກຊະນິດ
ທ່ານກິນໄດ້ 21ທ່ານຢ່າກິນສັດຊະນິດໃດທີ່ຕາຍເອງ ທ່ານຈະໃຫ້ແກ່ຄົນຕ່າງດ້າວທີ່ຢູ່ພາຍໃນ
ປະຕູເມືອງຂອງທ່ານກິນກໍໄດ້ ຫລືທ່ານຈະຂາຍໃຫ້ແກ່ຄົນຕ່າງປະເທດກໍໄດ້ ເພາະວ່າທ່ານເປັນ
ຊົນຊາດທີ່ບໍລິສຸດແດ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານທັງຫລາຍ ທ່ານຢ່າຕົ້ມລູກແບ້ດ້ວຍນໍ້າ
ນົມແມ່ຂອງມັນ

22ຜົນລະປູກໄດ້ແຕ່ລະປີຈາກພືດໃນນາຂອງທ່ານນັ້ນ ທ່ານຈົ່ງຖວາຍໜຶ່ງສ່ວນສິບ 23ທ່ານ
ຈົ່ງກິນໜຶ່ງສ່ວນສິບທີ່ໄດ້ຈາກເຂົ້າ ຫລືນໍ້າອະງຸ່ນຂອງທ່ານ ຫລືນໍ້າມັນຂອງທ່ານ ແລະຜົນລຸ້ນ
ທຳອິດຈາກຝູງງົວ ແລະຝູງແບ້ແກະຂອງທ່ານ ຕໍ່ພຣະພັກພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານ
ໃນສະຖານທີ່ຊຶ່ງພຣະອົງຈະຊົງເລືອກໄວ້ ເພື່ອໃຫ້ພຣະນາມຂອງພຣະອົງສະຖິດຢູ່ບ່ອນນັ້ນ
ເພື່ອທ່ານທັງຫລາຍຈະໄດ້ຮຽນຮູ້ທີ່ຈະຢຳເກງພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານຢູ່ສະເໝີ
24ຖ້າໄລຍະທາງໄກເກີນໄປ ທ່ານບໍ່ສາມາດນຳເອົາໜຶ່ງສ່ວນສິບມາໄດ້ ໃນເມື່ອພຣະຜູ້ເປັນເຈົ້າ
ພຣະເຈົ້າຂອງທ່ານໄດ້ອວຍພອນແກ່ທ່ານ 25ທ່ານຈົ່ງຂາຍສິ່ງຂອງນັ້ນເອົາເງິນ ແລະຫໍ່ເງິນຖື
ໄວ້ ແລະໄປຍັງສະຖານທີ່ຊຶ່ງພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານຈະຊົງເລືອກໄວ້ 26ແລະເອົາ
ເງິນນັ້ນຊື້ສິ່ງໃດໆທີ່ທ່ານປາດຖະໜາ ຈະເປັນງົວ ແກະ ຫລືເຫລົ້າອະງຸ່ນ ແລະສິ່ງໃດໆທີ່ທ່ານ
ປາດຖະໜາ ແລະທ່ານຈົ່ງກິນຢູ່ບ່ອນນັ້ນຕໍ່ພຣະພັກພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານ ແລະ
ຈົ່ງມ່ວນຊື່ນທັງຕົວທ່ານ ແລະຄອບຄົວຂອງທ່ານດ້ວຍ 27ທ່ານທັງຫລາຍຢ່າປະຖິ້ມຄົນເລວີຊຶ່ງ
ຢູ່ພາຍໃນປະຕູເມືອງຂອງຕົນ ເພາະວ່າພວກເຂົາບໍ່ມີສ່ວນແບ່ງ ຫລືມໍລະດົກກັບທ່ານ 28ເມື່ອ
ຄົບສາມປີ ທຸກເທື່ອທ່ານທັງຫລາຍຈົ່ງນຳເອົາໜຶ່ງສ່ວນສິບຈາກພືດຜົນທີ່ໄດ້ໃນປີນັ້ນ ມາສະສົມ
ໄວ້ພາຍໃນປະຕູເມືອງຂອງທ່ານ 29ຄົນເລວີ (ເພາະວ່າພວກເຂົາບໍ່ມີສ່ວນແບ່ງ ຫລືມໍລະດົກກັບ
ທ່ານ) ຄົນຕ່າງດ້າວ ລູກກຳພ້າພໍ່ ແລະແມ່ໝ້າຍຜູ້ຊຶ່ງຢູ່ພາຍໃນປະຕູເມືອງຂອງທ່ານ ຈະໄດ້ມາ
ກິນຢ່າງອີ່ມເຕັມ ເພື່ອວ່າພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານຈະຊົງອຳນວຍພຣະພອນແກ່ບັນ-
ດາກິດຈະການທີ່ມືຂອງທ່ານທັງຫລາຍໄດ້ເຮັດນັ້ນ”

# ບົດທີ 15

## ຄຳສັ່ງສອນເລື່ອງອາຫານ

[1]“ເມື່ອຄົບທຸກໆເຈັດປີ ທ່ານທັງຫລາຍຕ້ອງມີການປົດປ່ອຍ [2]ໃຫ້ເຮັດການປົດປ່ອຍດັ່ງນີ້
ເຈົ້າໜີ້ທຸກຄົນຈະຕ້ອງຍົກສິ່ງທີ່ຕົນໃຫ້ເພື່ອນບ້ານຢືມໄປນັ້ນ ຢ່າທວງສິ່ງນັ້ນຄືນຈາກເພື່ອນບ້ານ
ຫລືພີ່ນ້ອງຂອງຕົນ ເພາະວ່າໄດ້ປະກາດການປົດປ່ອຍຂອງ ພຣະຜູ້ເປັນເຈົ້າ ແລ້ວ [3]ທ່ານທັງ-
ຫລາຍຈະທວງຄືນຈາກຄົນຕ່າງດ້າວກໍໄດ້ ແຕ່ທ່ານຕ້ອງຍົກໜີ້ແກ່ພີ່ນ້ອງຂອງທ່ານທີ່ເປັນໜີ້
ທ່ານ [4]ຍົກເວັ້ນເມື່ອບໍ່ມີຄົນທຸກຍາກໃນໝູ່ພວກທ່ານທັງຫລາຍ ເພາະວ່າ ພຣະຜູ້ເປັນເຈົ້າ ຈະຊົງ
ອຳນວຍພຣະພອນແກ່ທ່ານໃນແຜ່ນດິນ ທີ່ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງທ່ານປະທານໃຫ້ທ່ານ
ເປັນມໍລະດົກນັ້ນ [5]ຖ້າທ່ານພຽງແຕ່ປະຕິບັດຕາມພຣະສຸລະສຽງຂອງ ພຣະຜູ້ເປັນເຈົ້າ ພຣະເຈົ້າ
ຂອງທ່ານ ຄວນລະວັງທີ່ຈະເຮັດຕາມພຣະບັນຍັດທັງຫລາຍ ຊຶ່ງຂ້າພະເຈົ້າໄດ້ສັ່ງທ່ານໃນມື້ນີ້
[6]ເພາະວ່າ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງທ່ານ ຈະຊົງອຳນວຍພຣະພອນທ່ານດັ່ງທີ່ພຣະອົງຊົງ
ສັນຍາຕໍ່ທ່ານນັ້ນ ທ່ານທັງຫລາຍຈະໃຫ້ປະຊາຊາດຫລາຍຊາດຢືມສິ່ງຂອງຂອງທ່ານ ແຕ່ທ່ານ
ຢ່າຢືມຂອງພວກເຂົາ ທ່ານທັງຫລາຍຈະປົກຄອງຢູ່ເໜືອປະຊາຊາດ ແຕ່ພວກເຂົາທັງຫລາຍຈະ
ບໍ່ປົກຄອງເໜືອທ່ານ

[7]ຖ້າໃນທ່າມກາງພວກທ່ານມີຄົນຈົນຄົນໜຶ່ງເປັນພີ່ນ້ອງຂອງທ່ານຢູ່ພາຍໃນປະຕູເມືອງໃດໆ
ໃນແຜ່ນດິນຊຶ່ງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງທ່ານປະທານແກ່ທ່ານ ທ່ານຢ່າມີໃຈແຂງກະດ້າງ
ແລະຫົດມືຂອງທ່ານໄວ້ຕໍ່ໜ້າພີ່ນ້ອງຂອງຕົນຜູ້ທຸກຍາກນັ້ນ [8]ແຕ່ທ່ານທັງຫລາຍຈົ່ງຍື່ນມືຂອງ
ທ່ານຢ່າງໃຈກວ້າງຂວາງຕໍ່ພວກເຂົາ ແລະໃຫ້ພວກເຂົາຢືມເຄື່ອງຂອງພໍແກ່ຄວາມຕ້ອງການ
ຂອງພວກເຂົາ ບໍ່ວ່າຈະເປັນສິ່ງຂອງໃດໆກໍຕາມ [9]ຈົ່ງລະວັງໃຫ້ດີຢ້ານວ່າຈະມີຄວາມຄິດໃນ
ຈິດໃຈຊົ່ວຂອງທ່ານວ່າ ‘ປີທີເຈັດ ປີທີ່ຈະຕ້ອງປົດປ່ອຍມາເຖິງແລ້ວ’ ແລະຕາທ່ານກໍອິດສາຕໍ່ພີ່-
ນ້ອງຂອງຕົນ ທ່ານຈຶ່ງບໍ່ຍອມໃຫ້ອັນໃດແກ່ພວກເຂົາເລີຍ ແລະພວກເຂົາຈະຮ້ອງທູນຕໍ່ ພຣະຜູ້-
ເປັນເຈົ້າ ເລື່ອງຄວາມຜິດບາບກໍຈະຕົກຖືກທ່ານເອງ [10]ທ່ານຈົ່ງໃຫ້ພວກເຂົາ ແລະເມື່ອໃຫ້
ພວກເຂົາແລ້ວ ຢ່າມີໃຈຄິດເສຍດາຍ ເພາະວ່າເຫດນີ້ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງທ່ານຈະ
ຊົງອຳນວຍພຣະພອນແກ່ທ່ານໃນບັນດາກິດຈະການທັງໝົດຂອງທ່ານ ບໍ່ວ່າທ່ານຈະລົງມືເຮັດ
ສິ່ງໃດກໍຕາມ [11]ເພາະວ່າຄົນຈົນຈະບໍ່ໝົດໄປຈາກແຜ່ນດິນ ດັ່ງນັ້ນຂ້າພະເຈົ້າຈຶ່ງສັ່ງທ່ານວ່າ
‘ທ່ານຕ້ອງຍື່ນມືໃຫ້ຢ່າງໃຈກວ້າງຂວາງຕໍ່ພີ່ນ້ອງຂອງຕົນ ຄືຕໍ່ຄົນທຸກຍາກ ຄົນຂັດສົນ ຊຶ່ງຢູ່ໃນ
ແຜ່ນດິນຂອງທ່ານ’

[12]ຖ້າພີ່ນ້ອງຂອງທ່ານຊຶ່ງເປັນຄົນເຮັບເຣີບໍ່ວ່າຊາຍຫລືຍິງ ທີ່ພວກເຂົາຂາຍໄວ້ແກ່ທ່ານ ຈົ່ງ
ໃຫ້ບົວລະບັດທ່ານຫົກປີ ເມື່ອເຖິງປີທີເຈັດກໍໃຫ້ປ່ອຍພວກເຂົາເປັນອິດສະຫລະພາບພົ້ນໄປຈາກ
ທ່ານ [13]ແລະເມື່ອທ່ານປ່ອຍພວກເຂົາເປັນອິດສະຫລະໄປຈາກທ່ານ ທ່ານຢ່າປ່ອຍພວກເຂົາໄປ
ມືເປົ່າ [14]ທ່ານຈົ່ງມີໃຈກວ້າງຂວາງ ໂດຍຈັດບັນດາສິ່ງຂອງໃຫ້ແກ່ພວກເຂົາ ຊຶ່ງເປັນສິ່ງຂອງ
ຈາກຝູງ, ແບ້ ແກະຂອງທ່ານຈາກລານຟາດເຂົ້າຂອງທ່ານ ແລະຈາກອ່າງຢຽບໝາກອະງຸ່ນ
ຂອງທ່ານ ທ່ານຈົ່ງໃຫ້ແກ່ພວກເຂົາຕາມສົມຄວນຕາມທີ່ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງທ່ານ

ຊົງອຳນວຍພຣະພອນແກ່ທ່ານ 15ທ່ານຈົ່ງຈື່ໄວ້ວ່າ ທ່ານເຄີຍເປັນຂ້າທາດໃນແຜ່ນດິນ ເອຢິບ
ແລະ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງທ່ານໄດ້ຊົງໄຖ່ທ່ານໄວ້ ດັ່ງນັ້ນ ຂ້າພະເຈົ້າຈຶ່ງສັ່ງເລື່ອງນີ້
ແກ່ທ່ານໃນມື້ນີ້ 16ແຕ່ຖ້າຂ້າທາດຜູ້ນັ້ນຈະກ່າວແກ່ທ່ານວ່າ 'ຂ້ານ້ອຍຈະບໍ່ໄປຈາກທ່ານ' ເພາະ-
ວ່າລາວຮັກທ່ານ ແລະຄອບຄົວຂອງທ່ານ ເພາະວ່າລາວຢູ່ກັບທ່ານ ມັນກໍສະບາຍດີ 17ຈົ່ງເອົາ
ເຫລັກແທງໃບຫູຂອງລາວໃຫ້ຊອດໄປຕິດກັບປະຕູເຮືອນ ດັ່ງນີ້ ລາວຈະເປັນຂ້າທາດຂອງທ່ານ
ຕະຫລອດໄປ ທ່ານຈົ່ງເຮັດເຊັ່ນນີ້ແກ່ຂ້າທາດຍິງດ້ວຍ 18ເມື່ອທ່ານປ່ອຍພວກເຂົາໃຫ້ເປັນອິດ-
ສະຫລະນັ້ນ ທ່ານຢ່າຮູ້ສຶກໜັກອົກໜັກໃຈ ເພາະວ່າພວກເຂົາໄດ້ຮັບໃຊ້ທ່ານມາຫົກປີແລ້ວ
ແລະທັງກາຍຄ່າແຮງຫລາຍກວ່າລູກຈ້າງເປັນສອງເທົ່າ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງທ່ານຈະ
ຊົງອຳນວຍພຣະພອນແກ່ທ່ານໃນການທັງປວງທີ່ທ່ານໄດ້ເຮັດນັ້ນ

19ສັດໂຕຜູ້ຫົວປີ ຊຶ່ງເກີດໃນຝູງງົວ ຫລືຝູງແບ້, ແກະນັ້ນ ທ່ານທັງຫລາຍຈົ່ງຖວາຍໄວ້ແດ່
ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງທ່ານ ທ່ານຢ່າໃຊ້ງົວຫົວປີເຮັດວຽກ ຫລືຕັດຂົນຈາກແກະຫົວປີ
20ທ່ານ ແລະຄອບຄົວຂອງທ່ານຈົ່ງກິນສັດຫົວປີນັ້ນຕໍ່ພຣະພັກ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງ
ທ່ານທຸກໆປີ ໃນສະຖານທີ່ຊຶ່ງ ພຣະຜູ້ເປັນເຈົ້າ ຈະຊົງກຳນົດໄວ້ນັ້ນ 21ແຕ່ຖ້າສັດນັ້ນມີຕຳໜິ
ໃດໆຄືເປັນງ່ອຍ ຫລືຕາບອດ ຫລືມີຕຳໜິຊົ່ວຮ້າຍຢ່າງໃດຢ່າງໜຶ່ງ ທ່ານຢ່າຖວາຍບູຊາແດ່
ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງທ່ານ 22ທ່ານຈົ່ງກິນສັດນັ້ນພາຍໃນປະຕູເມືອງຂອງທ່ານ ທັງຜູ້ທີ່
ມີມົນທິນ ແລະຜູ້ທີ່ສະອາດກໍກິນໄດ້ ບໍ່ວ່າຈະເປັນຊີ້ນຟານ ຫລືຊີ້ນກວາງ 23ພຽງແຕ່ທ່ານຢ່າກິນ
ເລືອດຂອງມັນເທົ່ານັ້ນ ທ່ານຈົ່ງເທຖິ້ມລົງດິນຄືເທນໍ້າ"

# ບົດທີ 16

## ການປົດປ່ອຍທຸກໆ ເຈັດປີ

1"ທ່ານຈົ່ງຖືເດືອນ ອາບິບ [ກ] ທ່ານທັງຫລາຍຈົ່ງຖືປັດສະຄາ ແດ່ ພຣະຜູ້ເປັນເຈົ້າ ພຣະເຈົ້າ
ຂອງທ່ານ ເພາະວ່າໃນເດືອນອາບິບນັ້ນ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງທ່ານຊົງນຳທ່ານອອກ
ຈາກ ເອຢິບ ໃນເວລາກາງຄືນ 2ແລະທ່ານຈົ່ງຖວາຍປັດສະຄາ ເປັນເຄື່ອງບູຊາແດ່ພຣະຜູ້ເປັນ-
ເຈົ້າ ພຣະເຈົ້າ ຂອງທ່ານ ຈາກຝູງແບ້, ແກະຫລືຝູງງົວ ໃນບ່ອນທີ່ ພຣະຜູ້ເປັນເຈົ້າ ຈະຊົງເລືອກ
ໄວ້ ໃຫ້ພຣະນາມຂອງພຣະອົງປະທັບທີ່ນັ້ນ 3ຢ່າກິນເຂົ້າຈີ່ມີເຊື້ອແປ້ງໃນປັດສະຄາ ຕະຫລອດ
ເຈັດມື້ທ່ານຈົ່ງກິນເຂົ້າຈີ່ບໍ່ມີເຊື້ອແປ້ງ ເປັນເຂົ້າຈີ່ແຫ່ງຄວາມທຸກໃຈ ເພາະວ່າທ່ານຮີບໜີອອກ
ມາຈາກແຜ່ນດິນ ເອຢິບ ເພື່ອທ່ານຈະລະນຶກເຖິງມື້ທີ່ທ່ານອອກມາຈາກແຜ່ນດິນ ເອຢິບ ຕະຫລອດ
ຊີວິດຂອງທ່ານ 4ຕະຫລອດເຈັດມື້ນັ້ນ ຢ່າໃຫ້ເຫັນເຊື້ອເຂົ້າຈີ່ພາຍໃນອານາເຂດປະເທດຂອງ
ທ່ານ ຫລືຊີ້ນສັດຊຶ່ງທ່ານໄດ້ບູຊາໃນຕອນແລງມື້ທຳອິດເຫລືອຢູ່ຕະຫລອດຄືນຈົນຮອດມື້ອື່ນເຊົ້າ
5ທ່ານທັງຫລາຍຢ່າຖວາຍ ປັດສະຄາ ພາຍໃນປະຕູ ເມືອງ ໃດໆ ຊຶ່ງ ພຣະຜູ້ເປັນເຈົ້າ ພຣະເຈົ້າ
ຂອງທ່ານຊົງປະທານແກ່ທ່ານ 6ແຕ່ທ່ານຈົ່ງຖວາຍປັດສະຄາ ໃນສະຖານທີ່ຊຶ່ງ ພຣະຜູ້ເປັນເຈົ້າ
ພຣະເຈົ້າ ຂອງທ່ານຈະຊົງເລືອກໄວ້ ໃຫ້ພຣະນາມຂອງພຣະອົງປະທັບຢູ່ທີ່ນັ້ນ ໃນຕອນແລງ

---

[ກ]ຈຽງ ຫລື ເດືອນທີໜຶ່ງ

ເມື່ອຕາເວັນຕົກແລ້ວ ຊຶ່ງເປັນເວລາດຽວກັນກັບທີ່ທ່ານອອກຈາກເອຢິບ 7ທ່ານຈົ່ງເຮັດໃຫ້ສຸກ
ແລະກິນໃນສະຖານທີ່ຊຶ່ງພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານຈະຊົງເລືອກໄວ້ ເມື່ອຮຸ່ງເຊົ້າທ່ານ
ຈົ່ງກັບໄປເຕັນຂອງຕົນເອງ 8ທ່ານຈົ່ງກິນເຂົ້າຈີ່ບໍ່ມີເຊື້ອແປ້ງຫົກມື້ ແຕ່ໃນມື້ທີເຈັດເປັນປະຊຸມ
ອັນສັກສິດຖວາຍແດ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານ ໃນມື້ນັ້ນຢ່າເຮັດການງານໃດໆ

## ເທດສະການປັດສະຄາ ແລະເຂົ້າຈີ່ບໍ່ມີເຊື້ອແປ້ງ

9ຈົ່ງຕັ້ງຕົ້ນນັບໃຫ້ຄົບເຈັດອາທິດເລີ່ມແຕ່ມື້ທຳອິດທີ່ທ່ານກ່ຽວເຂົ້າ 10ທ່ານທັງຫລາຍຈົ່ງຖື
ເທດສະການສະຫລອງການເກັບກ່ຽວຖວາຍແດ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານ ດ້ວຍການ
ຖວາຍຕາມໃຈສະໝັກຈາກມືຂອງທ່ານ ຊຶ່ງທ່ານຈະຖວາຍແດ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງ
ທ່ານ ຕາມທີ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານຊົງອຳນວຍພຣະພອນແກ່ທ່ານ 11ທ່ານຈົ່ງ
ມ່ວນຊື່ນຕໍ່ພຣະພັກພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານ ທັງຕົວທ່ານ ແລະລູກຊາຍຍິງຂອງ
ທ່ານ ທັງຂ້າທາດຊາຍຍິງຂອງທ່ານ ທັງຄົນເລວີຊຶ່ງຢູ່ພາຍໃນປະຕູເມືອງຂອງທ່ານ ທັງຄົນ
ຕ່າງດ້າວ ເດັກກຳພ້າພໍ່ແລະແມ່ໝ້າຍຊຶ່ງຢູ່ທ່າມກາງພວກທ່ານໃນສະຖານທີ່ຊຶ່ງພຣະຜູ້ເປັນເຈົ້າ
ພຣະເຈົ້າຂອງທ່ານຊົງເລືອກໄວ້ໃຫ້ພຣະນາມຂອງພຣະອົງປະທັບຢູ່ບ່ອນນັ້ນ 12ທ່ານຄວນຈື່ໄວ້
ວ່າທ່ານເຄີຍເປັນຂ້າທາດໃນເອຢິບ ທ່ານຄວນລະວັງໃນການປະຕິບັດຕາມກົດເກນເຫລົ່ານີ້

## ເທດສະການສະຫລອງລະດູເກັບກ່ຽວ

13ຈົ່ງສະຫລອງເທດສະການປຸກຕູບຢູ່ເປັນເວລາເຈັດມື້ເມື່ອທ່ານເກັບລວບລວມພືດຜົນຂອງ
ທ່ານຈາກລານຟາດເຂົ້າ ແລະຈາກອ່າງຢຽບໝາກອະງຸ່ນຂອງທ່ານແລ້ວ 14ໃນການລ້ຽງນັ້ນ
ທ່ານຈົ່ງມ່ວນຊື່ນ ທັງທ່ານ ແລະລູກຊາຍຍິງຂອງທ່ານ ແລະຂ້າທາດຊາຍຍິງຂອງທ່ານ ທັງຄົນ
ເລວີ ແລະຄົນຕ່າງດ້າວ ທັງເດັກກຳພ້າພໍ່ ແລະແມ່ໝ້າຍຊຶ່ງຢູ່ພາຍໃນປະຕູເມືອງຂອງທ່ານ
15ທ່ານຈົ່ງຖືເທດສະການນັ້ນແດ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານເຈັດມື້ ໃນສະຖານທີ່ຊຶ່ງ
ພຣະຜູ້ເປັນເຈົ້າຈະຊົງເລືອກໄວ້ ເພາະວ່າພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານຈະຊົງອຳນວຍ
ພຣະພອນແກ່ພືດຜົນທັງຫລາຍຂອງທ່ານ ແລະແກ່ຜົນງານທັງໝົດທີ່ມືທ່ານໄດ້ເຮັດ ເພື່ອວ່າ
ທ່ານຈະມີແຕ່ຄວາມປິຕິຍິນດີ

## ເທດສະການສະຫລອງປຸກຕູບຢູ່

16ບັນດາຜູ້ຊາຍທັງໝົດຈະຕ້ອງເຂົ້າມາເຝົ້າພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານປີລະສາມ
ເທື່ອ ໃນ ສະຖານທີ່ຊຶ່ງພຣະອົງຈະຊົງເລືອກໄວ້ ຄື ໃນເທດສະການກິນເຂົ້າຈີ່ບໍ່ມີເຊື້ອແປ້ງ
ເທດສະການເກັບກ່ຽວ ແລະເທດສະການປຸກຕູບຢູ່ ຢ່າໃຫ້ພວກເຂົາໄປເຝົ້າພຣະຜູ້ເປັນເຈົ້າມື
ເປົ່າ 17ໃຫ້ທຸກຄົນຖວາຍຕາມຄວາມສາມາດຂອງຕົນ ຕາມສ່ວນພຣະພອນທີ່ພຣະຜູ້ເປັນເຈົ້າ
ພຣະເຈົ້າຂອງທ່ານທັງຫລາຍປະທານແກ່ທ່ານ

## ບັນດາຜູ້ຊາຍຈະຕ້ອງເຂົ້າເຝົ້າພຣະເຈົ້າປີລະສາມເທື່ອ

18ທ່ານທັງຫລາຍຈົ່ງເລືອກຕັ້ງຜູ້ພິພາກສາ ແລະເຈົ້າໜ້າທີ່ຕາມບັນດາປະຕູເມືອງຂອງທ່ານ
ຊຶ່ງພຣະຜູ້ເປັນເຈົ້າຂອງທ່ານປະທານແກ່ທ່ານ ຕາມຕະກູນຂອງທ່ານນັ້ນ ໃຫ້ພວກເຂົາພິພາກ-
ສາປະຊາຊົນຕາມຄວາມຍຸດຕິທຳ 19ທ່ານຢ່າເຮັດໃຫ້ເສຍຄວາມຍຸດຕິທຳ ຢ່າລຳອຽງ ຢ່າຮັບສິນ

ບົນ ເພາະວ່າສິນບົນເຮັດໃຫ້ຕາຂອງຄົນມີປັນຍາມືດມົວໄປ ແລະຄະດີຂອງຄົນຊອບທຳເສຍ
[20]ທ່ານຈົ່ງຕິດຕາມຄວາມຍຸດຕິທຳເທົ່ານັ້ນ ເພື່ອທ່ານຈະມີຊີວິດຢູ່ ແລະຮັບມໍລະດົກໃນແຜ່ນດິນ
ຊຶ່ງພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານປະທານແກ່ທ່ານ

[21]ທ່ານທັງຫລາຍຢ່າຕັ້ງເສົາໄມ້ໃດໆໃຊ້ເປັນຮູບເຄົາລົບຂ້າງແທ່ນບູຊາພຣະຜູ້ເປັນເຈົ້າຂອງ
ທ່ານຊຶ່ງທ່ານຈະສ້າງໄວ້ນັ້ນ [22]ແລະທ່ານຢ່າຕັ້ງເສົາສັກສິດເປັນຮູບເຄົາລົບ ຊຶ່ງພຣະຜູ້ເປັນເຈົ້າ
ຂອງທ່ານຊົງກຽດຊັງ"

# ບົດທີ 17

## ຜູ້ພິພາກສາ ແລະເຈົ້າຫນ້າທີ່ຕ່າງໆ

[1]"ທ່ານທັງຫລາຍຢ່ານຳເອົາງົວຜູ້ ຫລືແກະທີ່ມີຕຳໜິ ຫລືພິການໃດໆເປັນເຄື່ອງບູຊາແດ່
ພຣະຜູ້ເປັນເຈົ້າຂອງທ່ານ ເພາະວ່າເປັນສິ່ງທີ່ກຽດຊັງແດ່ພຣະຜູ້ເປັນເຈົ້າຂອງທ່ານ

## ຈົ່ງຖວາຍສະເພາະສິ່ງທີ່ດີທີ່ສຸດແດ່ພຣະເຈົ້າ

[2]ພາຍໃນປະຕູເມືອງໃດໆຂອງທ່ານທັງຫລາຍຊຶ່ງພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານປະ-
ທານແກ່ທ່ານນັ້ນ ຖ້າມີຊາຍ ຫລືຍິງຄົນໃດເຮັດສິ່ງທີ່ຊົ່ວຮ້າຍໃນສາຍພຣະເນດຂອງພຣະຜູ້-
ເປັນເຈົ້າພຣະເຈົ້າຂອງທ່ານ ໂດຍລະເມີດຕໍ່ພັນທະສັນຍາຂອງພຣະອົງ [3]ແລະໄປບົວລະບັດພະ
ອື່ນ ແລະນະມັດສະການພະເຫລົ່ານັ້ນ ຫລືຕາເວັນ ດວງເດືອນ ຫລືດວງດາວທັງຫລາຍໃນ
ທ້ອງຟ້າ ຊຶ່ງຂ້າພະເຈົ້າໄດ້ຫ້າມໄວ້ [4]ມີຄົນບອກທ່ານແລ້ວ ແລະທ່ານກໍໄດ້ຍິນ ທ່ານທັງຫລາຍ
ຈົ່ງພະຍາຍາມສືບສວນ ແລະຖ້າເປັນຄວາມຈິງ ແລະພິສູດໄດ້ວ່າ ສິ່ງທີ່ໜ້າກຽດຊັງນັ້ນມີຄົນ
ເຮັດໃນພວກອິສຣາເອນ [5]ທ່ານຈົ່ງນຳເອົາຊາຍ ຫລືຍິງຜູ້ເຮັດສິ່ງຊົ່ວຮ້າຍນັ້ນມາທີ່ປະຕູເມືອງ
ແລະທ່ານຈົ່ງເອົາຫີນແກວ່ງໃສ່ຊາຍ ຫລືຍິງ [6]ຜູ້ທີ່ຖືກກ່າວໂທດເຖິງຕາຍນັ້ນ ໃຫ້ມີພະຍານສອງ
ຫລືສາມປາກຢືນຢັນວ່າຜູ້ນັ້ນມີຄວາມຜິດ ຈຶ່ງໃຫ້ປັບໂທດເຖິງຕາຍໄດ້ ຢ່າລົງໂທດຜູ້ໃດເຖິງ
ຕາຍດ້ວຍພະຍານປາກດຽວ [7]ຜູ້ທີ່ເປັນພະຍານຕ້ອງລົງມືກ່ອນໃນການລົງໂທດຄົນນັ້ນເຖິງຕາຍ
ຕໍ່ໄປຄົນທັງປວງຈຶ່ງຮ່ວມມືນຳກັນ ທັງນີ້ເພື່ອທ່ານທັງຫລາຍຈະກຳຈັດຄວາມຊົ່ວຈາກທ່າມກາງ
ພວກທ່ານ

[8]ຖ້າຄະດີໃດເກີດຂຶ້ນເປັນເລື່ອງຍາກທີ່ຈະຕັດສິນໄດ້ວ່າ ເປັນຄະດີຂ້າຄົນຕາຍໂດຍເຈດຕະ-
ນາຫລືບໍ່ ເປັນຄະດີກ່ຽວກັບການຖຽງກຳມະສິດໃນຊັບ ເປັນຄະດີທຳຮ້າຍຮ່າງກາຍ ເປັນຄະດີ
ໃດໆຊຶ່ງໂຕ້ແຍ້ງກັນພາຍໃນປະຕູເມືອງຂອງທ່ານ ຈົ່ງລຸກຂຶ້ນພາກັນໄປຍັງສະຖານທີ່ຊຶ່ງພຣະຜູ້-
ເປັນເຈົ້າພຣະເຈົ້າຂອງທ່ານຊົງເລືອກໄວ້ [9]ຈົ່ງໄປຫາຄົນເລວີຊຶ່ງເປັນປະໂລຫິດ ແລະໄປຫາຜູ້
ພິພາກສາປະຈຳການໃນສະໄໝນັ້ນ ທ່ານຈົ່ງປຶກສາຫາລືກັບເພິ່ນ ແລະເພິ່ນຈະຊີ້ແຈງໃຫ້ທ່ານຮູ້
ເຖິງກົດໝາຍ [10]ແລ້ວທ່ານຈົ່ງປະຕິບັດຕາມຄຳແນະນຳ ຊຶ່ງເພິ່ນຊີ້ແຈງແກ່ທ່ານ ຈາກສະຖານທີ່
ຊຶ່ງພຣະຜູ້ເປັນເຈົ້າຊົງເລືອກນັ້ນ ແລະທ່ານຈົ່ງລະວັງໃນການປະຕິບັດຕາມທຸກສິ່ງທີ່ເພິ່ນແນະ-
ນຳທ່ານ [11]ທ່ານຈົ່ງເຮັດຕາມຄຳແນະນຳຈາກພຣະບັນຍັດທີ່ເພິ່ນໃຫ້ແກ່ທ່ານ ແລະເຮັດຕາມກົດ-
ໝາຍທີ່ເພິ່ນໄດ້ສັ່ງທ່ານ ທ່ານທັງຫລາຍຢ່າຫັນເຫໄປຈາກກົດໝາຍ ຢ່າຫັນໄປທາງຂວາມື ຫລື

ຊ້າຍມື [12]ຜູ້ໃດທີ່ຂັດຂືນບໍ່ໄດ້ເຮັດຕາມ ຄືບໍ່ໄດ້ເຊື່ອຟັງຄວາມປະໂລຫິດຜູ້ທີ່ຢືນປົວລະບັດຕໍ່
ພຣະພັກ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງທ່ານຢູ່ບ່ອນນັ້ນ ຫລືຟັງຄວາມຜູ້ພິພາກສາ ຜູ້ນັ້ນຕ້ອງ
ຕາຍ ທັງນີ້ກໍເພື່ອທ່ານທັງຫລາຍຈະກຳຈັດຄວາມຊົ່ວໄປຈາກ ອິສຣາເອນ [13]ແລະປະຊາຊົນທັງ-
ຫລາຍຈະໄດ້ຍິນ ແລະຢຳເກງ ແລະບໍ່ໄດ້ຂັດຂືນຕໍ່ໄປອີກ

## ຈົ່ງເອົາຫີນແກວ່ງໃສ່ຄົນທີ່ຂາບໄຫວ້ຮູບເຄົາລົບໃຫ້ຕາຍ

[14]ເມື່ອທ່ານມາເຖິງແຜ່ນດິນທີ່ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງທ່ານປະທານແກ່ທ່ານ ແລະ
ທ່ານຖືກຳມະສິດອາໄສຢູ່ໃນແຜ່ນດິນນັ້ນແລ້ວ ທ່ານຈະກ່າວວ່າ "ເຮົາຈະຕັ້ງກະສັດໄວ້ເໜືອເຮົາ
ຄືປະຊາຊາດອື່ນຊຶ່ງຢູ່ອ້ອມເຮົາ" [15]ກໍຈົ່ງຕັ້ງຜູ້ຊຶ່ງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງທ່ານຊົງເລືອກ
ໄວ້ໃຫ້ເປັນກະສັດເໜືອທ່ານ ຄືຕັ້ງຜູ້ໜຶ່ງຜູ້ໃດໃນພວກພີ່ນ້ອງຂອງທ່ານໃຫ້ເປັນກະສັດ ທ່ານຢ່າ
ຕັ້ງຄົນຕ່າງດ້າວຊຶ່ງບໍ່ແມ່ນພີ່ນ້ອງຂອງທ່ານໃຫ້ຢູ່ເໜືອທ່ານ [16]ແຕ່ວ່າຢ່າໃຫ້ຜູ້ນັ້ນມີມ້າຂອງຕົນ
ເອງຫລາຍເກີນໄປ ຫລືເປັນເຫດໃຫ້ປະຊາຊົນກັບໄປ ເອຢິບ ເພື່ອຈະມີມ້າຫລາຍໆ ເພາະວ່າ
ພຣະຜູ້ເປັນເຈົ້າ ໄດ້ບອກກັບທ່ານທັງຫລາຍແລ້ວວ່າ 'ເຈົ້າທັງຫລາຍຈະບໍ່ໄດ້ກັບໄປທາງນັ້ນອີກ
ເລີຍ' [17]ແລະຢ່າໃຫ້ຜູ້ນັ້ນມີເມຍຫລາຍ ຢ້ານວ່າຈິດໃຈຂອງລາວຈະຫັນເຫໄປ ຫລືຢ່າໃຫ້ມີເງິນມີ
ຄຳເປັນຂອງຕົນຢ່າງຫລວງຫລາຍ [18]ເມື່ອຜູ້ນັ້ນນັ່ງເທິງບັນລັງໃນລາຊະອານາຈັກ ກໍໃຫ້ຜູ້ນັ້ນ
ຄັດເລືອກພຣະບັນຍັດນີ້ໄວ້ໃນໜັງສື ເພື່ອປະໂຫຍດແກ່ຕົນເອງ ຈາກໜັງສືຊຶ່ງຢູ່ຕໍ່ໜ້າພວກປະ-
ໂລຫິດທີ່ເປັນຄົນ ເລວີ [19]ໃຫ້ກົດໝາຍນັ້ນຢູ່ກັບຜູ້ນັ້ນ ແລະໃຫ້ລາວອ່ານຢູ່ສະເໝີຕະຫລອດຊີວິດ
ຂອງຕົນ ເພື່ອລາວຈະໄດ້ຮຽນຮູ້ທີ່ຈະຢຳເກງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງຕົນ ໂດຍຖືຮັກສາ
ບັນດາຖ້ອຍຄຳໃນພຣະບັນຍັດ ແລະກົດເກນເຫລົ່ານີ້ແລະປະຕິບັດຕາມ [20]ເພື່ອວ່າຈິດໃຈຂອງ
ລາວຈະບໍ່ໄດ້ພອງຂຶ້ນສູງກວ່າພີ່ນ້ອງຂອງຕົນ ແລະເພື່ອລາວເອງຈະບໍ່ໄດ້ຫັນເຫຈາກພຣະບັນ-
ຍັດໄປທາງຂວາມື ຫລືທາງຊ້າຍມື ເພື່ອລາວຈະໄດ້ປົກຄອງລາຊະອານາຈັກຂອງລາວໄດ້ດົນ
ທັງຕົນເອງແລະລູກຫລານຂອງຕົນໃນ ອິສຣາເອນ"

# ບົດທີ 18

## ການເລືອກກະສັດສຳລັບຄົນອິສຣາເອນ

[1]"ຄົນ ເລວີ ຊຶ່ງເປັນປະໂລຫິດ ແລະຕະກູນ ເລວີ ທັງໝົດ ຈະບໍ່ມີສ່ວນແບ່ງ ຫລືມໍລະດົກຮ່ວມ
ກັບຄົນ ອິສຣາເອນ ພວກເຂົາຈະກິນເຄື່ອງບູຊາທີ່ຖວາຍດ້ວຍໄຟແດ່ ພຣະຜູ້ເປັນເຈົ້າ ແລະ
ສ່ວນທີ່ຕົກເປັນຂອງພຣະອົງ [2]ສະນັ້ນ ພວກເຂົາຈະບໍ່ມີມໍລະດົກໃນໝູ່ພວກພີ່ນ້ອງຂອງພວກເຂົາ
ພຣະຜູ້ເປັນເຈົ້າ ຊົງເປັນມໍລະດົກຂອງພວກເຂົາ ຕາມທີ່ພຣະອົງຊົງສັນຍາໄວ້ແລ້ວນັ້ນ [3]ໃຫ້ສ່ວນ
ຕໍ່ໄປນີ້ເປັນສ່ວນທີ່ປະໂລຫິດໄດ້ຮັບຈາກປະຊາຊົນ ຄືສ່ວນທີ່ໄດ້ຈາກຜູ້ທີ່ຖວາຍສັດບູຊາ ບໍ່ວ່າ
ຈະເປັນງົວຜູ້ ຫລືແກະ ກໍໃຫ້ພວກເຂົາມອບຊີ້ນຂາໜ້າ ຊີ້ນແກ້ມທັງສອງເບື້ອງ ແລະຊີ້ນທ້ອງ
ໃຫ້ແກ່ປະໂລຫິດ [4]ຜົນລະປູກລຸ້ນທຳອິດຂອງທ່ານຄື ເຂົ້າ ໝາກອະງຸ່ນ ນ້ຳມັນ ແລະຂົນແກະ
ລຸ້ນທຳອິດທີ່ໄດ້ຈາກແກະຂອງທ່ານ ຈົ່ງມອບໃຫ້ແກ່ປະໂລຫິດ [5]ເພາະວ່າ ພຣະຜູ້ເປັນເຈົ້າ ພຣະ-
ເຈົ້າ ຂອງທ່ານໄດ້ເລືອກພວກເຂົາຈາກຕະກູນທັງໝົດຂອງທ່ານ ໃຫ້ຢືນປົວລະບັດໃນພຣະນາມ

ພຣະຜູ້ເປັນເຈົ້າ ທັງຕົວພວກເຂົາ ແລະລູກຫລານຂອງພວກເຂົາສືບຕໍ່ກັນໄປເປັນນິດ [6]ຖ້າຄົນ
ເລວີຄົນໃດມາຈາກປະຕູເມືອງໃດໃນອິສຣາເອນອັນເປັນທີ່ຢູ່ຂອງພວກເຂົາ ຈະມາຍັງສະຖານທີ່
ຊຶ່ງ ພຣະຜູ້ເປັນເຈົ້າ ຊົງເລືອກໄວ້ກໍໃຫ້ພວກເຂົາມາໄດ້ຕາມໃຈປາດຖະໜາ [7]ແລ້ວພວກເຂົາຈະ
ບົວລະບັດໃນພຣະນາມ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງພວກເຂົາ ແບບດຽວກັນກັບບັນດາຄົນ
ເລວີພີ່ນ້ອງຂອງພວກເຂົາ ຜູ້ຢືນບົວລະບັດຕໍ່ພຣະພັກ ພຣະຜູ້ເປັນເຈົ້າ ຢູ່ບ່ອນນັ້ນ [8]ໃຫ້ພວກເຂົາ
ໄດ້ສ່ວນທີ່ຈະກິນເທົ່າໆກັນ ນອກເໜືອຈາກສ່ວນທີ່ພວກເຂົາໄດ້ມາດ້ວຍການຂາຍຊັບສິນຂອງ
ຕົນເອງ

## ນໍລະດົກສຳລັບຄົນເລວີແລະພວກປະໂລຫິດ

[9]ເມື່ອທ່ານທັງຫລາຍເຂົ້າໄປໃນແຜ່ນດິນຊຶ່ງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງທ່ານປະທານແກ່
ທ່ານ ທ່ານຢ່າຮຽນຮູ້ທີ່ຈະເຮັດສິ່ງໜ້າກຽດຊັງຕາມປະຊາຊາດເຫລົ່ານັ້ນ [10]ຢ່າໃຫ້ມີຄົນໜຶ່ງຄົນ
ໃດໃນໝູ່ພວກທ່ານຊຶ່ງໃຫ້ລູກຊາຍຫລືລູກສາວຂອງຕົນລຸຍໄຟ ຢ່າໃຫ້ຜູ້ໃດເປັນໝໍມໍ ເປັນໝໍດູ
ເປັນຜູ້ສ່ຽງໂຊກເບິ່ງເຫດການ ຫລືເປັນໝໍມົນ [11]ເປັນໝໍຜີ ເປັນຄົນຊົງ ເປັນພໍ່ມົດແມ່ມົດ ຫລື
ເປັນໝໍພາຍ [12]ເພາະວ່າທຸກຄົນທີ່ເຮັດຢ່າງນີ້ຄວນເປັນທີ່ກຽດຊັງແດ່ ພຣະຜູ້ເປັນເຈົ້າ ເພາະວ່າ
ໄດ້ເຮັດສິ່ງໜ້າກຽດຊັງເຫລົ່ານີ້ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງທ່ານທັງຫລາຍຈຶ່ງຊົງຂັບໄລ່ພວກ
ເຂົາໃຫ້ພົ້ນໜ້າທ່ານ [13]ທ່ານທັງຫລາຍຈົ່ງເປັນຄົນປາດສະຈາກຕຳໜິຕໍ່ພຣະພັກ ພຣະຜູ້ເປັນເຈົ້າ
ພຣະເຈົ້າ ຂອງທ່ານ [14]ເພາະວ່າປະຊາຊາດເຫລົ່ານີ້ ຊຶ່ງທ່ານກຳລັງຈະຍຶດຄອງນັ້ນ ຟັງຄວາມ
ໝໍມໍ ແລະພວກສ່ຽງໂຊກ ແຕ່ສ່ວນຕົວທ່ານນັ້ນ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງທ່ານບໍ່ຊົງຍິນ
ຍອມໃຫ້ທ່ານເຮັດເຊັ່ນນັ້ນ

## ໂມເຊຕັກເຕືອນບໍ່ໃຫ້ເຮັດຕາມຜູ້ທີ່ບໍ່ນັບຖືພຣະເຈົ້າ

[15]ໂມເຊ ໄດ້ເວົ້າຕໍ່ໄປວ່າ ພຣະຜູ້ເປັນເຈົ້າ ຈະຊົງເລືອກເອົາຄົນຈາກຊົນຊາດຂອງທ່ານເອງ
ເປັນຜູ້ປະກາດພຣະທຳເໝືອນຂ້າພະເຈົ້າ ສະນັ້ນຈົ່ງເຊື່ອຟັງພວກເພິ່ນສາ. [16]ໃນມື້ທີ່ຊຸມນຸມກັນຢູ່
ເທິງພູຊີນາຍ ນັ້ນ ພວກທ່ານຂໍຮ້ອງບໍ່ໃຫ້ໄດ້ຍິນສຽງຂອງ ພຣະຜູ້ເປັນເຈົ້າ ຫລືເຫັນໄຟອັນໜ້າ
ຢ້ານຂອງພຣະອົງຕໍ່ໄປອີກ ເພາະວ່າຖ້າເປັນດັ່ງນັ້ນ ພວກທ່ານຈະຕ້ອງຕາຍ. [17]ດັ່ງນັ້ນ ພຣະ-
ຜູ້ເປັນເຈົ້າ ຈຶ່ງຊົງບອກຂ້າພະເຈົ້າວ່າ ທີ່ພວກເຂົາຂໍຮ້ອງນັ້ນດີຫລາຍແລ້ວ. [18]ເຮົາຈະເລືອກເອົາ
ຄົນໜຶ່ງໃນຊົນຊາດຂອງພວກເຂົາເອງເປັນຜູ້ປະກາດພຣະທຳຂອງເຮົາຄືກັບທ່ານນີ້ ເຮົາຈະບອກ
ເລື່ອງໃຫ້ລາວເວົ້າ ແລະລາວຈະບອກປະຊາຊົນທຸກສິ່ງຕາມທີ່ເຮົາສັ່ງ. [19]ຜູ້ໃດບໍ່ເຊື່ອຟັງຜູ້ປະ-
ກາດພຣະທຳທີ່ເວົ້າໃນນາມຂອງເຮົາ ເຮົາຈະລົງໂທດຜູ້ນັ້ນ.

[20]ຖ້າຜູ້ປະກາດພຣະທຳຄົນໃດບັງອາດເວົ້າຖ້ອຍຄຳ ທີ່ເຮົາບໍ່ໄດ້ສັ່ງ ຫລືຜູ້ທີ່ເວົ້າໃນນາມຂອງ
ພະອື່ນ ຄົນຜູ້ນັ້ນຕ້ອງມີໂທດເຖິງຕາຍ. [21]ຖ້າພວກເຈົ້າຄິດໃນໃຈວ່າ ເຮັດແນວໃນຈຶ່ງຈະຮູ້ຄຳທີ່
ພຣະຜູ້ເປັນເຈົ້າ ບໍ່ໄດ້ກ່າວນັ້ນໄດ້. [22]ຈົ່ງເຂົ້າໃຈວ່າ ເມື່ອຜູ້ປະກາດພຣະທຳຄົນໃດເວົ້າໃນນາມ
ຂອງ ພຣະຜູ້ເປັນເຈົ້າ ແຕ່ວ່າເວົ້ານັ້ນບໍ່ເປັນຈິງ ຖ້ອຍຄຳນັ້ນກໍບໍ່ແມ່ນຂອງ ພຣະຜູ້ເປັນເຈົ້າ ເປັນ
ຖ້ອຍຄຳທີ່ລາວເວົ້າເອົາເອງ ສະນັ້ນ ພວກເຈົ້າຢ່າຢ້ານພວກເຂົາເລີຍ.”

# ບົດທີ 19

## ພຣະເຈົ້າຊົງສັນຍາຈະໃຫ້ມີຜູ້ປະກາດພຣະທຳ

1"ເມື່ອ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງທ່ານທັງຫລາຍຊົງຕັດບັນດາປະຊາຊາດ ຜູ້ຊຶ່ງ ພຣະຜູ້-
ເປັນເຈົ້າ ພຣະເຈົ້າ ຂອງທ່ານປະທານ ແຜ່ນດິນຂອງພວກເຂົາແກ່ທ່ານ ແລະທ່ານທັງຫລາຍຍຶດ
ຄອງຢູ່ໃນຫົວເມືອງ ແລະໃນບ້ານເຮືອນຂອງພວກເຂົາເຫລົ່ານັ້ນ 2ທ່ານຈຶ່ງແຍກເມືອງໄວ້ສາມ
ເມືອງສຳລັບພວກທ່ານທັງຫລາຍໃນທ່າມກາງແຜ່ນດິນ ຊຶ່ງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງທ່ານ
ປະທານແກ່ທ່ານເປັນກຳມະສິດນັ້ນ 3ທ່ານຈຶ່ງຈັດຕຽມໃຫ້ມີທາງ ແລະຈຶ່ງແບ່ງອານາເຂດແຜ່ນ-
ດິນ ຊຶ່ງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງທ່ານປະທານແກ່ທ່ານອອກເປັນສາມສ່ວນ ເພື່ອວ່າຜູ້ໃດ
ທີ່ໄດ້ຂ້າຄົນແລ້ວຈະຫລົບໜີໄປຢູ່ໃນເມືອງເຫລົ່ານັ້ນໄດ້ 4ຕໍ່ໄປນີ້ ເປັນເລື່ອງຂອງຄາດຕະກອນ
ຜູ້ທີ່ໜີໄປຢູ່ໃນເມືອງເຫລົ່ານັ້ນໄດ້ ແລະລອດຊີວິດຢູ່ ຄືຜູ້ໃດທີ່ໄດ້ຂ້າເພື່ອນບ້ານຂອງຕົນໂດຍບໍ່
ໄດ້ເຈດຕະນາ ໂດຍບໍ່ໄດ້ກຽດຊັງລາວມາກ່ອນ 5ເຊັ່ນ ຊາຍຄົນໜຶ່ງເຂົ້າໄປໃນປ່າພ້ອມກັບ
ເພື່ອນບ້ານຂອງຕົນເພື່ອຈະຕັດໄມ້ ເມື່ອລາວແກວ່ງຂວານເພື່ອຈະຕັດຕົ້ນໄມ້ລົງ ຫົວຂວານ
ຫລຸດຈາກດ້າມຖືກເພື່ອນບ້ານຂອງລາວ ແລະຄົນນັ້ນກໍເຖິງແກ່ຄວາມຕາຍ ກໍໃຫ້ລາວໜີໄປຍັງ
ເມືອງເຫລົ່ານີ້ເມືອງໃດເມືອງໜຶ່ງ ແລະລອດໄດ້ 6ດ້ວຍຢ້ານວ່າຜູ້ອາຄາດແຄ້ນກຳລັງຈະໄລ່ຕາມ
ຊາຍຜູ້ຂ້າຄົນນັ້ນທັນ ເພາະວ່າຫົນທາງໄກແລ້ວຂ້າລາວເສຍ ເຖິງວ່າຊາຍຜູ້ນັ້ນບໍ່ມີໂທດເຖິງ
ຕາຍ ເພາະວ່າລາວບໍ່ໄດ້ກຽດຊັງເພື່ອນບ້ານຂອງລາວມາກ່ອນ 7ດັ່ງນັ້ນ ຂ້າພະເຈົ້າຈຶ່ງສັ່ງທ່ານ
ວ່າ ໃຫ້ທ່ານຈັດແຍກຫົວເມືອງໄວ້ສາມຫົວເມືອງ 8ແລະຖ້າ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງທ່ານ
ຂະຫຍາຍອານາເຂດຂອງທ່ານ ດັ່ງທີ່ພຣະອົງໄດ້ຊົງສັນຍາໄວ້ກັບບັນພະບຸລຸດຂອງທ່ານ ແລະ
ປະທານແຜ່ນດິນທັງໝົດຊຶ່ງພຣະອົງຊົງສັນຍາຈະປະທານແກ່ບັນພະບູລຸດຂອງທ່ານໃຫ້ແກ່ທ່ານ
9ຖ້າທ່ານໄດ້ຖືຮັກສາບັນຍັດທັງໝົດນີ້ຢ່າງລະມັດລະວັງ ຊຶ່ງຂ້າພະເຈົ້າໄດ້ສັ່ງທ່ານໃນມື້ນີ້ ໂດຍ
ທີ່ທ່ານທັງຫລາຍຮັກ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງທ່ານ ແລະດຳເນີນຢູ່ໃນພຣະບັນຊາຂອງ
ພຣະອົງສະເໝີ ແລ້ວທ່ານຈຶ່ງເພີ່ມເຕີມຫົວເມືອງອີກສາມຫົວເມືອງນອກຈາກສາມຫົວເມືອງ
ເຫລົ່ານັ້ນ 10ດ້ວຍຢ້ານວ່າເລືອດທີ່ບໍ່ມີຄວາມຜິດຈະຕົກໃນແຜ່ນດິນຂອງທ່ານ ຊຶ່ງ ພຣະຜູ້ເປັນ-
ເຈົ້າ ພຣະເຈົ້າ ຂອງທ່ານປະທານແກ່ທ່ານເປັນມໍລະດົກ ແລະທ່ານທັງຫລາຍຈະຕ້ອງຮັບຜິດ-
ຊອບເລືອດນັ້ນ 11ແຕ່ຖ້າວ່າຜູ້ໃດກຽດຊັງເພື່ອນບ້ານຂອງຕົນ ແລະຄອຍຖ້າດັກລາວຢູ່ ແລະໄດ້
ລັກຕີລາວເຖິງແກ່ຄວາມຕາຍ ແລ້ວຊາຍຜູ້ນັ້ນກໍໜີເຂົ້າໄປໃນຫົວເມືອງເຫລົ່ານັ້ນເມືອງໃດເມືອງ
ໜຶ່ງ 12ແລ້ວພວກຜູ້ໃຫຍ່ໃນເມືອງຂອງຊາຍຜູ້ນັ້ນຈະສົ່ງຄົນໃຫ້ໄປຮັບຕົວຊາຍຜູ້ນັ້ນມາຈາກບ່ອນ
ນັ້ນ ແລະສົ່ງຕົວລາວໄວ້ໃນມືຜູ້ຄຽດແຄ້ນ ເພື່ອລາວຈະຕ້ອງຖືກໂທດເຖິງຕາຍ 13ຢ່າໃຫ້ໃນຕາ
ຂອງທ່ານເມດຕາສົງສານລາວ ແຕ່ທ່ານຈຶ່ງກຳຈັດຄວາມຜິດອັນເນື່ອງຈາກເລືອດທີ່ບໍ່ມີ ຄວາມ
ຜິດນັ້ນໃຫ້ໝົດໄປຈາກອິສຣາເອນ ເພື່ອທ່ານທັງຫລາຍຈະໄດ້ໄປດີມາດີ

## ເມືອງລີ້ໄພ

14ໃນ ເລື່ອງ ມໍລະດົກຊຶ່ງ ທ່ານ ຈະ ຮັບ ໃນ ແຜ່ນດິນທີ່ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງທ່ານປະ-
ທານແກ່ທ່ານເປັນກຳມະສິດນັ້ນ ທ່ານຢ່າຍ້າຍເສົາເຂດແດນຂອງເພື່ອນບ້ານຂອງທ່ານ ຊຶ່ງຄົນ

ບູຮານໄດ້ປັກໄວ້

## ຈົ່ງຮັກສາເສົາເຂດຂອງເພື່ອນບ້ານຂອງຕົນ

[15]ພະຍານປາກດຽວຈະຢືນຢັນກ່າວໂທດຜູ້ເຮັດຜິດແນວໜຶ່ງແນວໃດບໍ່ໄດ້ ຢ່າງໜ້ອຍທີ່ສຸດ
ຕ້ອງມີສອງປາກຂຶ້ນໄປ ຈຶ່ງຈະພິສູດໄດ້ວ່າຄົນນັ້ນເຮັດຜິດ. [16-18]ຖ້າຄົນໜຶ່ງກ່າວຮ້າຍປ້າຍສີອີກ
ຄົນໜຶ່ງວ່າເຮັດຜິດ ກໍໃຫ້ທັງສອງຝ່າຍເຂົ້າເຝົ້າພຣະເຈົ້າຕໍ່ໜ້າປະໂລຫິດ ແລະຜູ້ພິພາກສາຊຶ່ງຢູ່
ທີ່ນັ້ນ ແລ້ວຜູ້ພິພາກສາຈະສືບສວນຫາຄວາມຈິງຢ່າງລະອຽດ ແລະເລິກເຊິ່ງ ຖ້າພົບວ່າມີຜູ້ຫາ
ເລື່ອງໃສ່ຮ້າຍປ້າຍສີເພື່ອນບ້ານຂອງຕົນ. [19]ຜູ້ນັ້ນຈະໄດ້ຮັບໂທດ ແລະຖືກໃສ່ຮ້າຍປ້າຍສີຄືກັນ
ພວກທ່ານຈະກຳຈັດຄວາມຊົ່ວຮ້າຍໃຫ້ໝົດໄປໄດ້ດ້ວຍວິທີນີ້ແຫລະ. [20]ເມື່ອຄົນອື່ນໄດ້ຍິນເລື່ອງ
ນີ້ ພວກເຂົາກໍຈະຢ້ານ ແລະຈະບໍ່ມີໃຜເຮັດສິ່ງຊົ່ວຮ້າຍຢ່າງນັ້ນອີກ. [21]ພວກທ່ານຢ່າເມດຕາສົງ-
ສານ ຈົ່ງລົງໂທດດ້ວຍວິທີເອົາຊີວິດແທນຊີວິດ ຕາແທນຕາ ແຂ້ວແທນແຂ້ວ ມືແທນມື ແລະຕີນ
ແທນຕີນ.

# ບົດທີ 20

## ບັນຍັດກ່ຽວກັບພະຍານ

[1]"ເມື່ອທ່ານທັງຫລາຍຈະຍົກທັບໄປເຮັດສົງຄາມກັບພວກສັດຕູຂອງທ່ານ ແລະເຫັນມ້າ ລົດ
ຮົບ ແລະກອງທັບຫລວງຫລາຍໃຫຍ່ກວ່າຂອງທ່ານ ທ່ານຢ່າຊູ່ຢ້ານເຂົາ ເພາະວ່າພຣະຜູ້ເປັນ-
ເຈົ້າພຣະເຈົ້າຂອງທ່ານຊົງສະຖິດຢູ່ກັບທ່ານ ຜູ້ຊົງນຳທ່ານຂຶ້ນມາຈາກແຜ່ນດິນເອຢິບ [2]ແລະ
ເມື່ອໃກ້ຈະຕໍ່ສູ້ກັນ ປະໂລຫິດຈະອອກມາຢູ່ຂ້າງໜ້າ ແລະກ່າວແກ່ປະຊາຊົນ [3]ໂດຍຈະກ່າວວ່າ
'ໂອ ອິສຣາເອນ ຈົ່ງຟັງເທີ້ນ ມື້ນີ້ທ່ານມາໃກ້ ຈະສູ້ຮົບກັບສັດຕູຂອງທ່ານ ຢ່າໃຫ້ໃຈຂອງທ່ານ
ທັງຫລາຍວິຕົກກັງວົນ ຢ່າຊູ່ຢ້ານ ຫລືຫວັ່ນໄຫວ ຫລືຕົກໃຈຕໍ່ໜ້າສັດຕູ [4]ເພາະວ່າພຣະຜູ້ເປັນ-
ເຈົ້າ ພຣະເຈົ້າຂອງທ່ານສະເດັດໄປກັບທ່ານ ຊົງຕໍ່ສູ້ສັດຕູຂອງທ່ານເພື່ອທ່ານ ຈະປະທານໄຊ-
ຊະນະແກ່ທ່ານ' [5]ແລ້ວນາຍທະຫານຈະເວົ້າກັບປະຊາຊົນວ່າ 'ໃຜທີ່ສ້າງບ້ານໃໝ່ ແລະຍັງບໍ່ໄດ້
ເຮັດພິທີຖວາຍບ້ານນັ້ນ ໃຫ້ຜູ້ນັ້ນກັບໄປບ້ານຂອງຕົນ ຢ້ານວ່າລາວຈະຕາຍໃນສົງຄາມ ແລະ
ຄົນອື່ນຈະຖວາຍບ້ານນັ້ນ [6]ໃຜທີ່ປູກສວນໝາກອະງຸ່ນ ແລະຍັງບໍ່ໄດ້ກິນຜົນລະປູກຈາກສວນ
ອະງຸ່ນນັ້ນ ໃຫ້ຜູ້ນັ້ນກັບໄປບ້ານ ຢ້ານວ່າລາວຈະຕາຍໃນສົງຄາມ ແລະຄົນອື່ນຈະກິນໝາກອະ-
ງຸ່ນນັ້ນ [7]ຜູ້ໃດທີ່ໝັ້ນຜູ້ຍິງໄວ້ເປັນເມຍແລ້ວ ແຕ່ຍັງບໍ່ໄດ້ແຕ່ງງານກັນ ໃຫ້ຜູ້ນັ້ນກັບໄປບ້ານຂອງ
ຕົນ ຢ້ານວ່າລາວຈະຕາຍໃນສົງຄາມ ແລະຊາຍອື່ນຈະໄດ້ນາງໄປ" [8]ແລະນາຍທະຫານຈະເວົ້າ
ກັບປະຊາຊົນຕໍ່ໄປອີກວ່າ "ຜູ້ໃດທີ່ຢູ່ບ່ອນນີ້ມີຈິດໃຈຢ້ານ ແລະວິຕົກກັງວົນ ໃຫ້ຜູ້ນັ້ນກັບໄປ
ບ້ານຂອງຕົນ ຢ້ານວ່າຈິດໃຈພີ່ນ້ອງຂອງລາວຈະອ່ອນໄປຄືກັນກັບຈິດໃຈຂອງລາວ' [9]ເມື່ອນາຍ
ທະຫານເວົ້າກັບປະຊາຊົນໝົດແລ້ວ ກໍໃຫ້ເລືອກຕັ້ງຜູ້ບັງຄັບບັນຊາກອງຕ່າງໆໃຫ້ເປັນຫົວໜ້າ
ປະຊາຊົນ

[10]ເມື່ອພວກທ່ານເຂົ້າໄປໃກ້ເມືອງຊຶ່ງທ່ານຈະໄປສູ້ຮົບນັ້ນ ຈົ່ງສະເໜີສັນຕິພາບແກ່ເມືອງນັ້ນ
ກ່ອນ [11]ຖ້າພວກເຂົາຕອບທ່ານຢ່າງສັນຕິ ແລະເປີດປະຕູເມືອງໃຫ້ແກ່ທ່ານ ກໍໃຫ້ປະຊາຊົນທັງ

ປວງທີ່ພົບຢູ່ໃນເມືອງນັ້ນເຮັດວຽກໃຫ້ແກ່ທ່ານ ແລະບົວລະບັດທ່ານ [12]ຖ້າເມືອງນັ້ນບໍ່ຮ່ວມສັນຕິ
ກັບທ່ານ ແຕ່ກັບອອກມາຮົບ ກໍໃຫ້ທ່ານເຂົ້າໂຈມຕີເມືອງນັ້ນໄດ້ [13]ເມື່ອ ພຣະຜູ້ເປັນເຈົ້າ ພຣະ-
ເຈົ້າ ປະທານເມືອງນັ້ນໄວ້ໃນມືຂອງທ່ານແລ້ວ ທ່ານຈົ່ງຂ້າຊາຍທຸກຄົນດ້ວຍຄົມດາບ [14]ແຕ່ຜູ້ຍິງ
ແລະເດັກນ້ອຍ ສັດ ແລະທຸກສິ່ງໃນເມືອງນັ້ນ ຄືຂອງທີ່ຍຶດມາໄວ້ທັງໝົດ ທ່ານຈົ່ງຍຶດເອົາເປັນ
ຂອງຕົນ ທ່ານຈົ່ງພໍໃຈໃນສິ່ງຂອງທີ່ຍຶດມາຈາກສັດຕູຂອງທ່ານ ຊຶ່ງ ພຣະຜູ້ເປັນເຈົ້າ ພຣະເຈົ້າ
ຂອງທ່ານປະທານແກ່ທ່ານ [15]ທ່ານທັງຫລາຍຈົ່ງເຮັດເຊັ່ນນີ້ແກ່ທຸກຫົວເມືອງທີ່ຢູ່ໄກຈາກທ່ານ
ຊຶ່ງບໍ່ແມ່ນຫົວເມືອງຂອງປະຊາຊາດໃກ້ໆນີ້

[16]ແຕ່ໃນຫົວເມືອງຂອງຊົນຊາດທັງຫລາຍນີ້ ຊຶ່ງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງທ່ານປະທານ
ແກ່ທ່ານເປັນມໍລະດົກ ທ່ານຢ່າໄວ້ຊີວິດສິ່ງໃດໆທີ່ຫັນໃຈໄດ້ເລີຍ [17]ແຕ່ຈົ່ງທຳລາຍພວກເຂົາໃຫ້
ໝົດໄປ ຄືຄົນຮິດຕີ ຄົນອະໂມຣິດ ຄົນການາອານ ຄົນເປຣີຊີ ຄົນຮີວີ ແລະຄົນເຢບຸດ ດັ່ງ
ທີ່ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງທ່ານຊົງສັ່ງໄວ້ [18]ເພື່ອວ່າພວກເຂົາຈະບໍ່ໄດ້ສອນທ່ານໃຫ້ເຮັດ
ສິ່ງທີ່ໜ້າກຽດຊັງທັງຫລາຍ ຊຶ່ງພວກເຂົາໄດ້ເຮັດຕໍ່ພະຂອງພວກເຂົາ ເພາະວ່າການເຮັດເຊັ່ນນັ້ນ
ເປັນການເຮັດບາບຕໍ່ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງທ່ານ [19]ເມື່ອທ່ານອ້ອມຫົວເມືອງໜຶ່ງຢູ່ດົນ
ນານ ເພື່ອຈະສູ້ຮົບເອົາຫົວເມືອງນັ້ນຢ່າໃຊ້ຂວານຟັນທຳລາຍຕົ້ນໄມ້ຂອງເມືອງນັ້ນ ເພາະວ່າ
ທ່ານທັງຫລາຍຈະກິນໝາກຈາກຕົ້ນໄມ້ນັ້ນ ຢ່າຕັດລົງເພື່ອໃຊ້ໃນການອ້ອມເມືອງນັ້ນ (ເພາະວ່າ
ຕົ້ນໄມ້ໃນທົ່ງນາເປັນຊີວິດມະນຸດ) [20]ສ່ວນຕົ້ນໄມ້ທີ່ທ່ານຮູ້ວ່າບໍ່ໃຊ້ເປັນອາຫານ ທ່ານຈະທຳ-
ລາຍ ແລະຕັດລົງກໍໄດ້ ເພື່ອຈະໃຊ້ສ້າງເຄື່ອງລ້ອມເມືອງໃນການສູ້ຮົບຂອງທ່ານ ຈົນກວ່າ
ເມືອງນັ້ນຈະແຕກ”

# ບົດທີ 21

## ກົດຕ່າງໆ ເລື່ອງສົງຄາມ

[1]“ໃນ ແຜ່ນດິນຊຶ່ງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງທ່ານປະທານໃຫ້ທ່ານເປັນກຳມະສິດນັ້ນ
ຖ້າພົບສົບຄົນທີ່ຖືກຂ້າຖິ້ມຢູ່ກາງແຈ້ງ ບໍ່ຮູ້ວ່າຜູ້ໃດຂ້າລາວຕາຍ [2]ກໍໃຫ້ພວກຜູ້ໃຫຍ່ ແລະຜູ້ພິ-
ພາກສາຂອງທ່ານອອກມາວັດແທກເບິ່ງໄລຍະທາງເຖິງເມືອງຕ່າງໆທີ່ຢູ່ອ້ອມຮອບສົບ ຜູ້ຕາຍ
ນັ້ນ [3]ແລ້ວເມືອງທີ່ຢູ່ໃກ້ທີ່ສຸດກັບສົບຜູ້ຕາຍນັ້ນໃຫ້ພວກຜູ້ໃຫຍ່ຂອງເມືອງນັ້ນນຳເອົາງົວແມ່ໜຶ່ງ
ໂຕຊຶ່ງຍັງບໍ່ເຄີຍໃຊ້ງານ ແລະຍັງບໍ່ເຄີຍທຽມແອກ [4]ແລະໃຫ້ພວກຜູ້ໃຫຍ່ຂອງເມືອງນັ້ນນຳງົວ
ແມ່ໂຕນັ້ນໄປທີ່ຮ່ອມພູຊຶ່ງມີນໍ້າໄຫລ ຊຶ່ງບໍ່ມີໃຜໄຖ ຫລືຫວ່ານເລີຍ ແລະໃຫ້ຫັກຄໍງົວແມ່ທີ່ຮ່ອມ
ພູນັ້ນ [5]ແລະປະໂລຫິດຜູ້ເປັນລູກຫລານຂອງ ເລວີ ຈະຕ້ອງເຂົ້າມາໃກ້ດ້ວຍ ພຣະຜູ້ເປັນເຈົ້າ
ພຣະເຈົ້າ ຂອງທ່ານໄດ້ຊົງເລືອກພວກເຂົາໄວ້ໃຫ້ບົວລະບັດພຣະອົງ ແລະໃຫ້ອວຍພອນໃນ
ພຣະນາມຂອງ ພຣະຜູ້ເປັນເຈົ້າ ໃຫ້ການຜິດຖຽງ ແລະການທຳຮ້າຍທຸກເລື່ອງສິ້ນສຸດລົງດ້ວຍ
ຄຳຂອງປະໂລຫິດເຫລົ່ານີ້ [6]ແລະພວກຜູ້ໃຫຍ່ທຸກຄົນຂອງເມືອງທີ່ຢູ່ໃກ້ທີ່ສຸດຈະລ້າງມືຂອງພວກ
ເຂົາທັງຫລາຍເທິງງົວແມ່ທີ່ຖືກຫັກຄໍໃນ ຮ່ອມພູເຂົານັ້ນ [7]ແລະພວກເຂົາຈະເປັນພະຍານວ່າ ‘ມື
ຂອງເຮົາທັງຫລາຍບໍ່ໄດ້ເຮັດໃຫ້ເລືອດຂອງຊາຍຜູ້ນີ້ຕົກ ແລະຕາຂອງເຮົາທັງຫລາຍກໍບໍ່ໄດ້ເຫັນ

ເລືອດຂອງລາວຕົກ 8ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງລຶບລ້າງມົນທິນບາບຂອງປະຊາຊົນຊາວອິ-
ສຣາເອນຂອງພຣະອົງ ຜູ້ຊຶ່ງພຣະອົງໄດ້ຊົງໄຖ່ໄວ້ ຂໍຢ່າຊົງຖືໂທດປະຊາຊົນຊາວອິສຣາເອນ
ຂອງພຣະອົງຍ້ອນເລືອດທີ່ບໍ່ມີຄວາມຜິດ' ແລະຂໍຊົງອະໄພໂທດອັນເນື່ອງຈາກເລືອດນີ້ໃຫ້ແກ່
ພວກເຂົາ 9ດັ່ງນີ້ແຫລະ ທ່ານຈະກຳຈັດຄວາມຜິດອັນເນື່ອງຈາກເລືອດທີ່ບໍ່ມີຄວາມຜິດນັ້ນໄປ
ຈາກທ່າມກາງທ່ານໄດ້ ເມື່ອທ່ານເຮັດສິ່ງທີ່ພໍພຣະໄທໃນສາຍພຣະເນດຂອງພຣະຜູ້ເປັນເຈົ້າ

## ການສອບສວນຄະດີຄາດຕະກຳ

10ເມື່ອທ່ານອອກໄປສູ້ຮົບກັບສັດຕູຂອງທ່ານ ແລະພຣະຜູ້ເປັນເຈົ້າ ພຣະເຈົ້າຂອງທ່ານຊົງ
ມອບພວກເຂົາໄວ້ໃນມືຂອງທ່ານແລ້ວ ແລະທ່ານຈັບພວກເຂົາມາເປັນຊະເລີຍ 11ທ່ານເຫັນຍິງ
ງາມຄົນໜຶ່ງໃນໝູ່ຊະເລີຍນັ້ນ ແລະປາດຖະໜາຢາກໄດ້ມາເປັນເມຍຂອງທ່ານ 12ທ່ານຈຶ່ງພາຜູ້-
ຍິງນັ້ນມາໄວ້ທີ່ເຮືອນຂອງທ່ານ ໃຫ້ນາງແຖຫົວ ແລະຕັດເລັບມືເສຍ 13ແລະໃຫ້ນາງແກ້ເຄື່ອງ
ແຕ່ງກາຍຢ່າງຊະເລີຍອອກ ແລະໃຫ້ຢູ່ໃນເຮືອນຂອງທ່ານ ໃຫ້ໄວ້ທຸກເຖິງບິດາມານດາຂອງ
ນາງໜຶ່ງເດືອນເຕັມ ຫລັງຈາກນັ້ນທ່ານຈຶ່ງຈະເຂົ້າໄປຫານາງ ແລະ ເປັນຜົວຂອງນາງໄດ້ ແລະ
ໃຫ້ນາງເປັນເມຍຂອງທ່ານ 14ພາຍຫລັງ ຖ້າທ່ານບໍ່ພໍໃຈນາງນັ້ນແລ້ວ ຈົ່ງປ່ອຍນາງໄປຕາມແຕ່
ນາງຈະພໍໃຈໄປໃສ ຢ່າຂາຍນາງເອົາເງິນ ຢ່າເຮັດກັບນາງຢ່າງຂ້າທາດ ເພາະວ່າທ່ານໄດ້ເຮັດ
ໃຫ້ນາງອັບອາຍແລ້ວ

15ຖ້າຊາຍຄົນໜຶ່ງມີເມຍສອງຄົນ ຮັກຄົນໜຶ່ງຊັງອີກຄົນໜຶ່ງ ເມຍທັງສອງຄືທັງຄົນທີ່ຮັກ ແລະ
ຄົນທີ່ຊັງກໍກຳເນີດລູກນຳກັນ ແລະລູກຊາຍຫົວປີເປັນລູກຂອງເມຍຄົນທີ່ຕົນຊັງ 16ເມື່ອເຖິງມື້
ແບ່ງຊັບສິນໃຫ້ແກ່ລູກຊາຍເປັນມໍລະດົກນັ້ນ ຢ່າໃຫ້ລາວເຮັດແກ່ລູກຊາຍຂອງເມຍຄົນທີ່ຕົນຮັກ
ນັ້ນຄືກັບເປັນລູກຫົວປີ ແທນລູກຊາຍຂອງເມຍທີ່ຕົນຊັງ ຊຶ່ງເປັນລູກຫົວປີ 17ແຕ່ລາວຕ້ອງ
ຍອມຮັບລູກຫົວປີຄືລູກຊາຍຂອງເມຍຄົນທີ່ຕົນຊັງ ໂດຍແບ່ງເຄື່ອງຂອງໃຫ້ແກ່ລູກຫົວປີສອງ
ເທົ່າ ເພາະວ່າຄົນນີ້ເປັນຕົ້ນກຳລັງຂອງພໍ່ ສິດທິຂອງລູກຫົວປີເປັນຂອງລາວ

## ການແຕ່ງງານກັບຊະເລີຍ ແລະຈົ່ງຮັກສາສິດທິລູກຫົວປີໄວ້

18ຖ້າຊາຍຄົນໃດມີລູກຊາຍທີ່ດື້ ແລະບໍ່ຢູ່ໃນໂອວາດ ບໍ່ຟັງຄວາມພໍ່ຂອງຕົນ ຫລືຽງແມ່ຂອງ
ຕົນ ເຖິງວ່າບິດາ ມານດາຈະໄດ້ຕີສອນ ລາວກໍບໍ່ຍອມຟັງ 19ໃຫ້ບິດາ ມານດາຈັບຕົວລາວ
ອອກມາຫາພວກຜູ້ໃຫຍ່ຂອງເມືອງນັ້ນ ໃນປະຕູເມືອງທີ່ພວກເຂົາອາໄສຢູ່ 20ແລະລາວຈະເວົ້າ
ກັບພວກຜູ້ໃຫຍ່ຂອງເມືອງນັ້ນວ່າ 'ລູກຊາຍຂອງເຮົາຄົນນີ້ເປັນຄົນດື້ດ້ານ ແລະບໍ່ຢູ່ໃນໂອວາດ
ບໍ່ຟັງຄວາມພໍ່ ແມ່ ເປັນຄົນຂີ້ດື້ ແລະຂີ້ເມົາ' 21ແລ້ວບັນດາຜູ້ຊາຍໃນເມືອງນັ້ນຈະເອົາຫີນ
ແກວ່ງລາວໃຫ້ຕາຍ ເພື່ອທ່ານຈະໄດ້ກຳຈັດຄວາມຊົ່ວໄປຈາກທ່າມກາງທ່ານ ຄົນອິສຣາເອນ
ທັງປວງຈະໄດ້ຍິນແລະຢຳເກງ

22ຖ້າຄົນໃດໄດ້ເຮັດຄວາມຜິດອັນມີໂທດເຖິງຕາຍ ແລະລາວຖືກປະຫານຊີວິດ ແລະແຂວນ
ລາວໄວ້ທີ່ຕົ້ນໄມ້ 23ຢ່າໃຫ້ສົບຄ້າງຢູ່ຕົ້ນໄມ້ຂ້າມຄືນ ທ່ານຈົ່ງຝັງລາວໃນມື້ດຽວກັນນັ້ນ (ດ້ວຍວ່າ
ຜູ້ທີ່ຕ້ອງຖືກແຂວນ ໄວ້ເທິງຕົ້ນໄມ້ກໍຕ້ອງຖືກສາບແຊ່ງໂດຍພຣະເຈົ້າ) ທ່ານຢ່າເຮັດໃຫ້ແຜ່ນ-
ດິນຂອງທ່ານຊຶ່ງພຣະຜູ້ເປັນເຈົ້າ ພຣະເຈົ້າຂອງທ່ານປະທານ ແກ່ທ່ານໃຫ້ເປັນມໍລະດົກນັ້ນ

ເປັນມົນທິນ"

# ບົດທີ 22

## ລູກຊາຍທີ່ດື້ ແລະບໍ່ຢູ່ໃນໂອວາດ

1"ເມື່ອທ່ານທັງຫລາຍເຫັນງົວ ຫລືແກະຂອງພີ່ນ້ອງຂອງທ່ານຫລົງມາ ຢ່າຢູ່ເສີຍ ຈົ່ງພາສັດ
ເຫລົ່ານັ້ນກັບໄປໃຫ້ພີ່ນ້ອງຂອງທ່ານ 2ຖ້າບ້ານລາວຢູ່ໄກ ຫລືທ່ານບໍ່ຮູ້ຈັກຕົວລາວ ຈົ່ງນຳສັດ
ນັ້ນມາໄວ້ທີ່ບ້ານຂອງທ່ານ ແລະໃຫ້ຢູ່ກັບທ່ານຈົນພີ່ນ້ອງມາທ່ຽວຫາ ແລ້ວທ່ານຈົ່ງມອບຄືນໃຫ້
ລາວໄປ 3ລໍຂອງພີ່ນ້ອງທ່ານກໍຈົ່ງຄືນໃຫ້ຄືກັນ ເສື້ອຜ້າຂອງພີ່ນ້ອງທ່ານກໍຈົ່ງຄືນໃຫ້ຄືກັນ ສິ່ງ
ໃດຂອງພີ່ນ້ອງທີ່ຫາຍໄປ ແລະທີ່ທ່ານພົບເຫັນ ທ່ານຈົ່ງສົ່ງຄືນໃຫ້ຄືກັນ ທ່ານຢ່າຢູ່ເສີຍ 4ຖ້າ
ທ່ານເຫັນລໍ ຫລືງົວຂອງພີ່ນ້ອງລົ້ມຢູ່ຕາມທາງ ຢ່າຢູ່ເສີຍ ທ່ານຈົ່ງຊ່ວຍໂຈມສັດເຫລົ່ານັ້ນລຸກ-
ຂຶ້ນອີກ

## ຄວາມຮັບຜິດຊອບຊ່ວຍເພື່ອນບ້ານ

5ຢ່າໃຫ້ຜູ້ຍິງໃຊ້ເຄື່ອງແຕ່ງກາຍຂອງຜູ້ຊາຍ ແລະຢ່າໃຫ້ຜູ້ຊາຍແຕ່ງກາຍດ້ວຍເຄື່ອງຂອງຜູ້-
ຍິງ ເພາະວ່າທຸກຄົນທີ່ເຮັດສິ່ງເຫລົ່ານີ້ກໍເປັນທີ່ໜ້າກຽດຊັງແດ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງ
ທ່ານ

6ຖ້າທ່ານບັງເອີນໄປພົບຮັງນົກຢູ່ຕາມທາງ ເທິງຕົ້ນໄມ້ຫລືພື້ນດິນ ມີລູກນົກ ຫລືໄຂ່ ແລະ
ແມ່ນົກກຳລັງຟັກຢູ່ເທິງລູກນົກ ຫລືໄຂ່ນັ້ນ ທ່ານຢ່າເອົາແມ່ນົກກັບລູກນົກໄປ 7ທ່ານຈົ່ງປ່ອຍແມ່
ນົກໄປ ແຕ່ລູກນົກນັ້ນທ່ານຈະເອົາໄປເປັນຂອງທ່ານກໍໄດ້ ເພື່ອທ່ານຈະໄປດີມາດີ ແລະທ່ານ
ຈະມີອາຍຸຍືນຍາວ

8ເມື່ອທ່ານກໍ່ເຮືອນໃໝ່ ຈົ່ງກໍ່ຂອບຂຶ້ນກັນໄວ້ທີ່ດາດຟ້າຫລັງຄາ ເພື່ອທ່ານຈະບໍ່ໄດ້ນຳເອົາ
ໂທດ ເນື່ອງດ້ວຍເລືອດຕົກມາສູ່ເຮືອນນັ້ນ ເພາະຢ້ານວ່າຈະມີຄົນຕົກລົງມາຈາກຫລັງຄາຕາຍ

## ວິທີແຕ່ງຕົວທີ່ຖືກຕ້ອງສຳລັບຊາຍ ແລະຍິງ

9ຢ່າເອົາເມັດພືດສອງຊະນິດຫວ່ານລົງໃນສວນອະງຸ່ນຂອງທ່ານ ຢ້ານວ່າທັງພືດຜົນທີ່ທ່ານ
ຫວ່ານ ແລະໝາກອະງຸ່ນຂອງສວນນັ້ນຈະເປັນມົນທິນ 10ທ່ານຢ່າເອົາງົວ ແລະລໍເຂົ້າທຽມໄຖ
ນຳກັນ 11ທ່ານຢ່າສວມໃສ່ເຄື່ອງແຕ່ງກາຍທີ່ຕໍ່າດ້ວຍຂົນສັດປົນດ້ວຍຜ້າປ່ານ 12ທ່ານຈົ່ງເຮັດ
ຍອຍຫ້ອຍໄວ້ທີ່ມຸມທັງສີ່ຂອງສົ້ນເສື້ອຄຸມຂອງທ່ານ ຊຶ່ງທ່ານໃຊ້ຄຸມຕົວ

## ບັນຍັດຂອງໂມເຊສອນເລື່ອງການແຍກອອກຈາກຄວາມຊົ່ວ

13ຖ້າຊາຍຄົນໃດໄດ້ພັນລະຍາ ແລະໄດ້ສົມສູ່ຢູ່ກັບນາງ ແລ້ວເກີດກຽດຊັງນາງ 14ແລະຫາ
ເຫດວ່າຍິງນັ້ນປະພຶດສິ່ງໜ້າອັບອາຍ ເຮັດໃຫ້ຊື່ສຽງຂອງນາງເສຍຫາຍ ໂດຍກ່າວວ່າ 'ຂ້ອຍ
ຮັບຜູ້ຍິງຄົນນີ້ມາເປັນພັນລະຍາ ຄັນຂ້ອຍເຂົ້າສົມສູ່ກັບນາງກໍເຫັນວ່ານາງບໍ່ໄດ້ເປັນພົມມະຈາລີ'
15ພໍ່ຂອງຍິງສາວຄົນນັ້ນ ແລະແມ່ຈະຕ້ອງນຳເອົາເຄື່ອງສຳຄັນອັນເປັນພະຍານວ່າ ຍິງນັ້ນເປັນ
ພົມມະຈາລີມາໃຫ້ພວກຜູ້ໃຫຍ່ຂອງເມືອງນັ້ນທີ່ປະຕູເມືອງ 16ແລະພໍ່ຂອງຍິງສາວນັ້ນຈະບອກ
ກັບພວກຜູ້ໃຫຍ່ວ່າ 'ຂ້ອຍໄດ້ຍົກລູກສາວຂອງຂ້ອຍໃຫ້ເປັນເມຍຂອງຜູ້ຊາຍຄົນນີ້ ແລະລາວກັບ

ກຽດຊັງ [17]ເບິ່ງແມ ຊາຍຜູ້ນີ້ຫາເຫດກ່າວຕິຕຽນວ່າ “ຂ້າພະເຈົ້າບໍ່ເຫັນວ່າລູກສາວຂອງທ່ານ
ເປັນພົມມະຈາລີເລີຍ” ນີ້ແຫລະ ເປັນເຄື່ອງສຳຄັນວ່າລູກສາວຂອງຂ້ອຍເປັນຍິງພົມມະຈາລີ’
ແລ້ວລາວຈະພີຜ້ານັ້ນອອກຕໍ່ໜ້າພວກຜູ້ໃຫຍ່ຂອງເມືອງນັ້ນໃຫ້ເປັນພະຍານ [18]ໃຫ້ພວກຜູ້ໃຫຍ່
ຂອງເມືອງນັ້ນຈັບຊາຍຄົນນັ້ນມາຂ້ຽນຕີ [19]ແລະປັບລາວເປັນເງິນໜຶ່ງຮ້ອຍເຊເຂ ແລະມອບເງິນ
ນັ້ນໃຫ້ແກ່ພໍ່ຂອງຍິງສາວ ເພາະວ່າລາວເຮັດໃຫ້ຍິງພົມມະຈາລີອິສຣາເອນຄົນໜຶ່ງເສຍຊື່ສຽງ
ຍິງນັ້ນຈະເປັນພັນລະຍາຂອງລາວຕໍ່ໄປ ລາວຈະຢ່າຮ້າງບໍ່ໄດ້ເລີຍຕະຫລອດຊີວິດ

## ຈົ່ງລົງໂທດຜູ້ຊາຍທີ່ກ່າວຮ້າຍເລື່ອງເມຍທີ່ບໍ່ມີຄວາມຜິດ

[20]ແຕ່ຖ້າເລື່ອງນັ້ນເປັນຄວາມຈິງ ແລະບໍ່ສາມາດຫາເຄື່ອງສຳຄັນມາເປັນພະຍານວ່າ ຍິງນັ້ນ
ເປັນພົມມະຈາລີ [21]ລາວຈະພາຍິງສາວນັ້ນອອກມານອກປະຕູເຮືອນພໍ່ຂອງນາງ ແລ້ວພວກຜູ້
ຊາຍໃນເມືອງຂອງນາງຈະເອົາຫີນແກວ່ງໃສ່ນາງໃຫ້ຕາຍ ເພາະວ່ານາງໄດ້ເຮັດຄວາມໂງ່ຈ້າໃນ
ອິສຣາເອນ ຄືເປັນຍິງໂສເພນີໃນເຮືອນຂອງພໍ່ ດັ່ງນີ້ແຫລະ ທ່ານຈະກຳຈັດຄວາມຊົ່ວອອກ
ຈາກທ່າມກາງທ່ານໄດ້

[22]ຖ້າພົບຊາຍຄົນໜຶ່ງໄປຮ່ວມກັບພັນລະຍາຂອງຄົນອື່ນ ທັງສອງຄົນຄືຊາຍທີ່ໄປຮ່ວມກັບຍິງ
ແລະຍິງຄົນນັ້ນຈະຕ້ອງມີໂທດເຖິງຕາຍ ດັ່ງນີ້ແຫລະ ທ່ານຈະກຳຈັດ ຄວາມຊົ່ວຈາກອິສຣາ-
ເອນ

[23]ຖ້າມີຍິງພົມມະຈາລີຄົນໜຶ່ງໝັ້ນໄວ້ກັບຜົວແລ້ວ ແລະມີຊາຍຄົນໜຶ່ງໄປພົບນາງໃນເມືອງ
ແລະໄດ້ຮ່ວມນອນກັບນາງ [24]ທ່ານຈົ່ງພາພວກເຂົາທັງສອງອອກໄປນອກປະຕູເມືອງນັ້ນແລະ
ທ່ານຈົ່ງເອົາຫີນແກວ່ງໃສ່ພວກເຂົາທັງສອງໃຫ້ຕາຍເສຍ ເພາະວ່າຕອນຢູ່ໃນເຫດການ ຍິງນັ້ນ
ບໍ່ໄດ້ຮ້ອງຂໍຄວາມຊ່ວຍເຫລືອ ເພາະວ່າຊາຍຄົນນັ້ນໄດ້ເຮັດໃຫ້ພັນລະຍາຂອງເພື່ອນບ້ານໄດ້ຮັບ
ຄວາມອັບອາຍ ດັ່ງນີ້ແຫລະທ່ານທັງຫລາຍຈະກຳຈັດຄວາມຊົ່ວເສຍຈາກທ່າມກາງພວກທ່ານໄດ້
[25]ແຕ່ຖ້າຊາຍຄົນໜຶ່ງໄປພົບຍິງສາວທີ່ຄົນອື່ນໝັ້ນໄວ້ແລ້ວທີ່ກາງທົ່ງ ຊາຍຄົນນັ້ນຈັບຕົວຍິງຄົນ
ນັ້ນ ແລະໄດ້ຮ່ວມນອນກັບນາງ ສະເພາະຜູ້ຊາຍຄົນທີ່ຮ່ວມນອນກັບນາງເທົ່ານັ້ນຈະຕ້ອງມີໂທດ
ເຖິງຕາຍ [26]ແຕ່ທ່ານຢ່າລົງໂທດຍິງສາວນັ້ນເລີຍ ຝ່າຍຍິງສາວນັ້ນບໍ່ມີຄວາມຜິດໃດທີ່ຈະຕ້ອງມີ
ໂທດເຖິງຕາຍ ເພາະວ່າຄະດີເລື່ອງນີ້ກໍຄືກັນກັບຄະດີເລື່ອງຊາຍຄົນໜຶ່ງເຂົ້າຕໍ່ສູ້ແລະຂ້າເພື່ອນ
ບ້ານຂອງຕົນ [27]ເພາະວ່າລາວພົບນາງທີ່ກາງທົ່ງນາ ໂດຍທີ່ນາງມີຄູ່ໝັ້ນໄວ້ແລ້ວ ແລະນາງໄດ້
ຮ້ອງຂໍຄວາມຊ່ວຍເຫລືອກໍບໍ່ມີຜູ້ໃດມາຊ່ວຍໄດ້

[28]ຖ້າຊາຍຄົນໜຶ່ງພົບຍິງພົມມະຈາລີຍັງບໍ່ມີຄົນໝັ້ນລາວຈຶ່ງຈັບຕົວນາງ ແລະໄດ້ຮ່ວມນອນ
ກັບນາງໂດຍມີຜູ້ພົບເຫັນ [29]ຊາຍຜູ້ທີ່ໄດ້ຮ່ວມນອນກັບນາງນັ້ນຈະຕ້ອງມອບເງິນຫ້າສິບເຊເຂໃຫ້
ແກ່ພໍ່ຂອງຍິງສາວຄົນນັ້ນ ແລະໃຫ້ຍິງນັ້ນຕົກເປັນພັນລະຍາຂອງຕົນ ເພາະວ່າລາວໄດ້ເຮັດໃຫ້
ນາງໄດ້ຮັບຄວາມອັບອາຍ ແລະລາວຈະຢ່າຮ້າງນາງບໍ່ໄດ້ຕະຫລອດຊີວິດ

[30]ຫ້າມບໍ່ໃຫ້ຜູ້ຊາຍຄົນໃດເອົາພັນລະຍາຂອງພໍ່ມາເປັນພັນລະຍາຂອງຕົນ ແລະຫ້າມບໍ່ໃຫ້
ເປີດຜ້າຂອງນາງຜູ້ເປັນຂອງພໍ່”

# ບົດທີ 23

## ຈົ່ງເອົາຫີນແກວ່ງໃສ່ຄົນຜິດປະເວນີໃຫ້ຕາຍເສຍ

[1]"ຊາຍຄົນໃດມີລູກອັນທະ ຫລືອະໄວຍະວະສືບພັນດ້ວນ ຢ່າໃຫ້ເຂົ້າໃນຊຸມນຸມຊົນຂອງ
ພຣະຜູ້ເປັນເຈົ້າ [2]ຫ້າມບໍ່ໃຫ້ລູກນອກກົດໝາຍເຂົ້າໃນຊຸມນຸມຊົນຂອງ ພຣະຜູ້ເປັນເຈົ້າ ຢ່າໃຫ້
ລູກຫລານຂອງພວກເຂົາເຂົ້າໃນຊຸມນຸມຊົນຂອງ ພຣະຜູ້ເປັນເຈົ້າ ຈົນຮອດສິບຊົ່ວອາຍຸຄົນ
[3]ຢ່າໃຫ້ຄົນ ອຳໂມນ ຫລືຄົນ ໂມອາບ ເຂົ້າໃນຊຸມນຸມຊົນຂອງ ພຣະຜູ້ເປັນເຈົ້າ ບຸກຄົນທີ່ເປັນ
ລູກຫລານຂອງຄົນທັງສອງຕະກູນນີ້ ຫ້າມບໍ່ໃຫ້ເຂົ້າໃນຊຸມນຸມຊົນຂອງ ພຣະຜູ້ເປັນເຈົ້າ ເລີຍຈົນ
ຮອດສິບຊົ່ວອາຍຸຄົນ [4]ເພາະວ່າຄົນເຫລົ່ານີ້ບໍ່ໄດ້ມາຕ້ອນຮັບທ່ານທັງຫລາຍຕາມທາງດ້ວຍເຂົ້າຈີ່
ແລະນ້ຳເມື່ອທ່ານອອກຈາກ ເອຢິບ ແລະເພາະວ່າພວກເຂົາໄດ້ຈ້າງ ບາລາອາມ ລູກຊາຍ ເບໂອ
ມາຈາກ ເປໂທ ແຫ່ງ ເມໂຊໂປຕາເມຍ ໃຫ້ສາບແຊ່ງທ່ານທັງຫລາຍ [5]ຢ່າງໃດກໍດີ ພຣະຜູ້ເປັນເຈົ້າ
ພຣະເຈົ້າຂອງທ່ານບໍ່ໄດ້ຟັງ ບາລາອາມ ແຕ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານຊົງປ່ຽນຄຳສາບ
ແຊ່ງໃຫ້ເປັນຄຳອວຍພອນທ່ານ ເພາະວ່າ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງທ່ານ ຊົງຮັກທ່ານ
[6]ທ່ານຢ່າຊອກຫາຄວາມສຸກສຳລານ ຫລືຄວາມຈະເລີນໃຫ້ພວກເຂົາຕະຫລອດຊີວິດຂອງທ່ານ
ທັງຫລາຍ [7]ທ່ານທັງຫລາຍຢ່າກຽດຊັງຄົນ ເອໂດມ ເພາະວ່າພວກເຂົາເປັນພີ່ນ້ອງຂອງທ່ານ
ທ່ານຢ່າກຽດຊັງຄົນ ເອຢິບ ເພາະວ່າທ່ານທັງຫລາຍເປັນຄົນຕ່າງດ້າວຢູ່ໃນແຜ່ນດິນຂອງພວກ
ເຂົານັ້ນ [8]ພາຍຂ້າງໜ້າ ລູກຫລານສາມສີ່ຊົ່ວເຊັ່ນຄົນຊຶ່ງເກີດກັບຄົນເຫລົ່ານີ້ຈະເຂົ້າໃນຊຸມນຸມ-
ຊົນຂອງພຣະຜູ້ເປັນເຈົ້າກໍໄດ້ດ້ວຍການຊຳລະຕົວ

[9]ເມື່ອທ່ານອອກໄປສູ້ຮົບກັບສັດຕູຂອງທ່ານ ທ່ານຈົ່ງລະວັງຕົວໃຫ້ພົ້ນຈາກສິ່ງຊົ່ວທຸກຢ່າງ
[10]ຖ້າຄົນໃດໃນພວກທ່ານບໍ່ສະອາດດ້ວຍເຫດການທີ່ເກີດຂຶ້ນໃນເວລາກາງຄືນ ລາວຕ້ອງໄປຢູ່
ນອກຄ້າຍ ຢ່າໃຫ້ລາວເຂົ້າມາໃນຄ້າຍ [11]ແຕ່ເມື່ອຮອດຕອນແລງແລ້ວ ໃຫ້ລາວອາບນ້ຳຊຳລະ
ຕົວ ແລະເມື່ອຕາເວັນຕົກແລ້ວ ລາວຈະກັບເຂົ້າມາໃນຄ້າຍກໍໄດ້

[12]ທ່ານທັງຫລາຍຕ້ອງມີບ່ອນຢູ່ພາຍນອກຄ້າຍ ເພື່ອຈະອອກໄປເຖິງໄດ້ [13]ແລະທ່ານຕ້ອງມີ
ສຽມກັບເຄື່ອງອາວຸດ ແລະເມື່ອທ່ານນັ່ງລົງຂ້າງນອກນັ້ນ ທ່ານຈົ່ງໃຊ້ໄມ້ຂຸດຂຸມໄວ້ ແລະທັບໄປ
ຝັງຂອງເສຍ (ອາຈົມ) ຂອງທ່ານເສຍ [14]ເພາະວ່າພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານຊົງດຳ-
ເນີນຢູ່ທ່າມກາງຄ້າຍຂອງທ່ານ ເພື່ອຈະຊ່ວຍທ່ານໃຫ້ພົ້ນ ແລະມອບສັດຕູຂອງທ່ານໄວ້ຕໍ່ໜ້າ
ທ່ານ ເຊັ່ນນັ້ນ ຄ້າຍຂອງທ່ານຕ້ອງບໍລິສຸດ ເພື່ອພຣະອົງຈະບໍ່ໄດ້ເຫັນສິ່ງທີ່ ເປິເປື້ອນໃນໝູ່
ພວກທ່ານ ແລ້ວສະເດັດໄປຈາກທ່ານ

## ບາງຄົນເຂົ້າໃນຊຸມນຸມຊົນຂອງພຣະຜູ້ເປັນເຈົ້າບໍ່ໄດ້

[15]ຖ້າມີຂ້າທາດໜີຈາກນາຍຂອງຕົນມາຢູ່ກັບທ່ານ ຢ່າຈັບຂ້າທາດນັ້ນໄປສົ່ງນາຍຂອງລາວ
[16]ຈົ່ງໃຫ້ຂ້າທາດນັ້ນຢູ່ກັບທ່ານ ຢູ່ໃນໝູ່ພວກທ່ານ ໃຫ້ຢູ່ໃນບ່ອນທີ່ລາວຈະເລືອກໃນປະຕູເມືອງ
ໜຶ່ງເມືອງໃດຕາມຄວາມພໍໃຈຂອງລາວ ຢ່າກົດຂີ່ຂົ່ມເຫງລາວ

[17]ຜູ້ຍິງຊາວອິສຣາເອນນັ້ນ ຢ່າໃຫ້ຄົນໜຶ່ງຄົນໃດເປັນຍິງໂສເພນີ ຢ່າໃຫ້ລູກຊາຍອິສຣາເອນ
ຄົນໜຶ່ງຄົນໃດເປັນກະເທີຍ [18]ທ່ານຢ່ານຳຄ່າຈ້າງຂອງຍິງໂສເພນີ ຫລືຄ່າຊື້ຂາຍມາໃນພຣະວິ-

ທານຂອງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງທ່ານສຳລັບຄຳປະຕິຍານຢ່າງໜຶ່ງຢ່າງໃດ ເພາະວ່າສິ່ງ
ທັງສອງນີ້ເປັນສິ່ງທີ່ໜ້າກຽດຊັງແດ່ ພຣະຜູ້ເປັນເຈົ້າ ພຣະເຈົ້າຂອງທ່ານ
19ທ່ານຢ່າໃຫ້ພີ່ນ້ອງຂອງທ່ານຢືມເງິນ ເພື່ອເອົາດອກເບ້ຍ ບໍ່ວ່າດອກເບ້ຍເງິນກູ້ ຫລືດອກ
ເບ້ຍເຄື່ອງບໍລິໂພກ ຫລືດອກເບ້ຍຂອງສິ່ງໃດໆທີ່ໃຫ້ຢືມ ເພື່ອເອົາດອກເບ້ຍ 20ທ່ານຈະໃຫ້ຄົນ
ຕ່າງດ້າວຢືມເພື່ອເອົາດອກເບ້ຍກໍໄດ້ ແຕ່ສຳລັບພີ່ນ້ອງຂອງທ່ານທ່ານ ຢ່າໃຫ້ຢືມເພື່ອເອົາດອກ
ເບ້ຍ ເພື່ອ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງທ່ານຈະຊົງອຳນວຍພຣະພອນແກ່ທ່ານໃນທຸກສິ່ງຊຶ່ງມື
ທ່ານໄດ້ເຮັດໃນແຜ່ນດິນ ຊຶ່ງທ່ານກຳລັງຈະເຂົ້າໄປຍຶດຄອງນັ້ນ

## ເລື່ອງຂ້າທາດທີ່ໜີໄປ, ຫ້າມເປັນຍິງໂສເພນີ, ເປັນກະເທີຍ ແລະ ການເອົາດອກເບ້ຍ

21ເມື່ອພວກທ່ານບະບົນຕໍ່ ພຣະຜູ້ເປັນເຈົ້າ ຢ່າລະເລີຍຕໍ່ສິ່ງທີ່ໄດ້ສັນຍາໄວ້ ຈົ່ງແກ້ບະເສຍ
ເພາະວ່າ ພຣະຜູ້ເປັນເຈົ້າ ຊົງໝັ້ນພຣະໄທວ່າ ຈະໄດ້ສິ່ງນັ້ນຈາກທ່ານອີ່ຫລີ. 22ການບໍ່ຮັກສາຄຳ-
ໝັ້ນສັນຍາຈະເປັນບາບ ແລະເມື່ອບໍ່ບະບົນຕໍ່ ພຣະຜູ້ເປັນເຈົ້າ ກໍບໍ່ມີບາບ. 23ແຕ່ຖ້າທ່ານເຕັມໃຈ
ບະບົນຕໍ່ ພຣະຜູ້ເປັນເຈົ້າ ຂອງທ່ານ ຈົ່ງໄດ້ເອົາໃຈໃສ່ເຮັດຕາມນັ້ນ. 24ເມື່ອທ່ານຍ່າງຜ່ານໄປໃນ
ສວນອະງຸ່ນຂອງເພື່ອນບ້ານ ທ່ານຈະກິນໝາກອະງຸ່ນໃນສວນນັ້ນຈົນອີ່ມກໍໄດ້ ແຕ່ບໍ່ຕ້ອງເກັບ
ໃສ່ກະຕ່າຖືໄປນຳ. 25ແລະເມື່ອຍ່າງຜ່າໄປໃນທົ່ງນາ ທ່ານຈະໃຊ້ມືເດັດເອົາເຂົ້າມາກິນກໍໄດ້ ແຕ່
ຢ່າໄດ້ກ່ຽວເອົາ.

# ບົດທີ 24

## ການແກ້ບະ ແລະການກິນ

1ສົມມຸດວ່າຊາຍຜູ້ໜຶ່ງມີເມຍແລ້ວ ພາຍຫລັງມານາງບໍ່ຮັກຜົວອີກຕໍ່ໄປ ແລະນາງມີການປະ-
ພຶດທີ່ບໍ່ດີບໍ່ງາມ ຊາຍຄົນນັ້ນຈຶ່ງເຮັດໜັງສືຢ່າຮ້າງຍື່ນໃຫ້ນາງ ແລ້ວລາວກໍບອກໃຫ້ນາງໜີອອກ
ຈາກເຮືອນໄປ. 2ຕໍ່ມາ ສົມມຸດວ່າ ນາງແຕ່ງງານກັບຊາຍອີກຄົນໜຶ່ງ. 3ຊາຍຜູ້ນັ້ນກໍຄິດຢາກປະ
ນາງຄືກັນ ລາວຈຶ່ງເຮັດໜັງສືຢ່າຮ້າງຍື່ນໃຫ້ນາງ ແລ້ວບອກໃຫ້ນາງໜີອອກຈາກເຮືອນໄປ.
4ຫລືສົມມຸດວ່າ ຜົວຜູ້ທີສອງຂອງນາງຕາຍໄປ ໃນກໍລະນີຢ່າງນີ້ ຜົວຜູ້ທຳອິດຈະເອົານາງຜູ້ທີ່ມີ
ມົນທິນແລ້ວມາເປັນເມຍອີກບໍ່ໄດ້ ເພາະຈະເຮັດໃຫ້ ພຣະຜູ້ເປັນເຈົ້າ ຊົງເສຍພຣະໄທ ພວກທ່ານ
ຢ່າເຮັດໃຫ້ແຜ່ນດິນທີ່ ພຣະຜູ້ເປັນເຈົ້າ ຊົງປະທານໃຫ້ນັ້ນມີຄວາມຜິດ.

## ການຢ່າຮ້າງແລະການແຕ່ງງານໃໝ່

5ເມື່ອຊາຍຜູ້ໃດເອົາເມຍໃໝ່ ຢ່າໃຫ້ຜູ້ນັ້ນເປັນທະຫານ ຫລືຮັບລາຊະການຢ່າງໜຶ່ງຢ່າງໃດ
ໃຫ້ລາວພັກຢູ່ບ້ານໜຶ່ງປີ ເພື່ອຈະໄດ້ມີຄວາມສຸກຢູ່ກັບເມຍ.
6ເມື່ອທ່ານໃຫ້ຄົນຢືມເຄື່ອງ ຢ່າໄດ້ເອົາຫີນໂມ້ແປ້ງຂອງລາວໄວ້ເປັນເຄື່ອງປະກັນ ເພາະຫີນ
ນັ້ນໃຊ້ເປັນເຄື່ອງມືສຳລັບລ້ຽງຊີບຂອງລາວ.
7ຜູ້ໃດລັກເອົາຄົນ ອິສຣາເອນ ເພື່ອນບ້ານຂອງຕົນ ໄປໃຊ້ເປັນທາດ ຫລືຂາຍໄປເປັນທາດ
ເສຍ ຄົນນັ້ນຈະຕ້ອງມີໂທດເຖິງຕາຍ ທ່ານຈົ່ງກຳຈັດຄົນຊົ່ວດ້ວຍວິທີຢ່າງນີ້ແຫລະ.

[8]ກ່ຽວກັບໂລກຜິວໜັງນັ້ນ ທ່ານຈົ່ງເອົາໃຈໃສ່ປິ່ນປົວຕາມຄຳແນະນຳຂອງປະໂລຫິດຊາວເລ-
ວີ ຕາມທີ່ຂ້າພະເຈົ້າໄດ້ບອກພວກເຂົາແລ້ວ. [9]ແລະຈົ່ງລະນຶກເຖິງເລື່ອງທີ່ພຣະຜູ້ເປັນເຈົ້າຂອງ
ທ່ານຊົງເຮັດຕໍ່ ຊາວມີຣີອາມໃນເວລາທີ່ພວກເຂົາເດີນທາງມາຈາກ ເອຢິບນັ້ນ.

[10]ເມື່ອທ່ານໃຫ້ຄົນຢືມເຄື່ອງ ຢ່າໄດ້ເຂົ້າໄປເອົາຂອງປະກັນໃນບ້ານເຮືອນຂອງລາວ. [11]ຈົ່ງ
ຢືນຢູ່ຂ້າງນອກ ໃຫ້ລາວເອົາອອກມາໃຫ້ທ່ານເອງ. [12]ຖ້າລາວເປັນຄົນທຸກຍາກ ຢ່າເກັບຂອງ
ປະກັນນັ້ນໄວ້ຈົນຄ້າງຄືນ. [13]ເມື່ອຕາເວັນຕົກໃຫ້ສົ່ງລາວໂລດ ເພື່ອລາວຈະໄດ້ໃຊ້ຫົ່ມໃນເວລາ
ເຂົ້ານອນ ແລ້ວລາວຈະຂອບໃຈທ່ານ ແລະພຣະຜູ້ເປັນເຈົ້າກໍຈະຊົງພໍພຣະໄທດ້ວຍ.

[14]ຢ່າບີບລູກຈ້າງທີ່ທຸກຍາກ ແລະຂັດສົນ ບໍ່ວ່າລາວຜູ້ນັ້ນຈະເປັນອິສຣາເອນເພື່ອນບ້ານ
ຂອງທ່ານ ຫລືເປັນຄົນຕ່າງດ້າວທີ່ອາໄສຢູ່ໃນເມືອງຂອງທ່ານກໍຕາມ. [15]ຈົ່ງຈ່າຍຄ່າຈ້າງໃຫ້
ລາວທຸກໆ ມື້ກ່ອນຕາເວັນຕົກ ເພາະລາວຕ້ອງການເງິນ ແລະເອົາໃຈຈົດຈໍ່ຢູ່ໃນຄ່າຈ້າງນັ້ນ ຖ້າ
ທ່ານບໍ່ຈ່າຍໃຫ້ລາວກໍຈະຟ້ອງຮ້ອງຕໍ່ພຣະຜູ້ເປັນເຈົ້າ ແລ້ວທ່ານຈະຖືກໂທດ.

[16]ຢ່າລົງໂທດພໍ່ແມ່ເຖິງຕາຍຍ້ອນລູກເຮັດຜິດ ຫລືລົງໂທດລູກເຖິງຕາຍຍ້ອນພໍ່ແມ່ເຮັດຜິດ
ບຸກຄົນໃດເຮັດຜິດ ກໍແມ່ນບຸກຄົນນັ້ນໄດ້ຮັບໂທດ.

[17]ຢ່າຕັດສິນຊາວຕ່າງດ້າວ ແລະລູກກຳພ້າ ຢ່າເອົາເສື້ອຜ້າຂອງແມ່ໝ້າຍໄວ້ເປັນເຄື່ອງປະ-
ກັນ. [18]ຈົ່ງຈື່ໄວ້ວ່າ ພວກທ່ານຕົກເປັນທາດຢູ່ໃນປະເທດເອຢິບ ແລ້ວພຣະຜູ້ເປັນເຈົ້າຊົງຊ່ອຍ
ໃຫ້ມີອິດສະຫລະພາບ ດ້ວຍເຫດນີ້ ຂ້າພະເຈົ້າຈຶ່ງສັ່ງໃຫ້ພວກທ່ານເຮັດສິ່ງດັ່ງກ່າວນີ້. [19]ເມື່ອ
ທ່ານລືມຟ່ອນເຂົ້າບາງຟ່ອນໄວ້ໃນນາ ຢ່າໄດ້ກັບຄືນໄປເອົາມັນມາ ຈົ່ງປະໄວ້ໃຫ້ຄົນຕ່າງດ້າວ
ລູກກຳພ້າແລະແມ່ໝ້າຍເສຍ ເພື່ອພຣະຜູ້ເປັນເຈົ້າຈະຊົງອວຍພອນໃຫ້ການງານຂອງທ່ານຈະ-
ເລີນຂຶ້ນ. [20-21]ເມື່ອທ່ານໄປເກັບເອົາໝາກກອກເທດ ແລະໝາກອະງຸ່ນມາ ຢ່າກັບຄືນໄປເກັບ-
ເລັມເອົາທີ່ຍັງເຫລືອຄ້າງຢູ່ນັ້ນອີກ ຈົ່ງປະໄວ້ໃຫ້ຄົນຕ່າງດ້າວ ລູກກຳພ້າ ແລະແມ່ໝ້າຍເສຍ
[22]ຢ່າລືມວ່າພວກທ່ານເຄີຍຕົກເປັນທາດໃນປະເທດເອຢິບມາແລ້ວ ດ້ວຍເຫດນີ້ ຂ້າພະເຈົ້າຈຶ່ງ
ສັ່ງໃຫ້ເຮັດສິ່ງດັ່ງກ່າວນີ້.

# ບົດທີ 25

[1]ສົມມຸດວ່າ ມີຄົນອິສຣາເອນສອງຄົນເປັນຄວາມກັນຢູ່ສານ ຄົນໜຶ່ງຖືກຕັດສິນວ່າເປັນຝ່າຍ
ຖືກ ອີກຄົນໜຶ່ງເປັນຝ່າຍຜິດ. [2]ຖ້າສານຕັດສິນໃຫ້ຂ້ຽນຕີຜູ້ຜິດ ກໍໃຫ້ຜູ້ພິພາກສາບອກຜູ້ນັ້ນ
ນອນລົງ ແລ້ວໃຫ້ຂ້ຽນຕີໜ້ອຍຫລາຍຕາມກຳໜົດຄວາມຜິດ. [3]ອາດຈະເປັນສີ່ສິບບາດກໍໄດ້ ແຕ່
ຢ່າໃຫ້ຫລາຍກວ່ານັ້ນ ເພາະຈະເປັນການຫຍໍ້ຫຍັນຄົນຜິດໃນທີ່ສາທາລະນະ.

[4]ຢ່າເອົາກະສອບອັດປາກງົວທີ່ກຳລັງຢຽບເຂົ້າ.

## ກົດໝາຍຕ່າງໆ

[5]ຖ້າມີສອງອ້າຍນ້ອງຢູ່ໃນຄອບຄົວດຽວກັນ ແລ້ວຄົນໜຶ່ງໄດ້ຕາຍໄປໂດຍທີ່ຍັງບໍ່ມີລູກ ເມຍ
ຂອງຜູ້ຕາຍຈະເອົາຊາຍໃນຄອບຄົວອື່ນມາເປັນຜົວບໍ່ໄດ້ ໃຫ້ອ້າຍຫລືນ້ອງຂອງຜູ້ຕາຍເອງຮັບ
ນາງໄປເປັນເມຍ. [6]ຖ້ານາງໄດ້ລູກຊາຍກ່ອນ ໃຫ້ນັບເປັນລູກຊາຍຂອງຜູ້ຕາຍນັ້ນ ເພື່ອເຊື້ອ-

ສາຍວົງວານຂອງລາວຈະມີຢູ່ໃນ ອິສຣາເອນ ສືບຕໍ່ໄປ. [7]ແຕ່ຖ້າອ້າຍ ຫລືນ້ອງຂອງຜູ້ຕາຍບໍ່
ຢາກໄດ້ນາງເປັນເມຍ ກໍໃຫ້ນາງໄປບອກພວກເຈົ້າເມືອງວ່າ ພີ່ນ້ອງທາງຜົວຂອງນາງບໍ່ເອົາ
ນາງເປັນເມຍ ລາວບໍ່ຍອມສືບໜໍ່ແນວໃຫ້ມີຢູ່ໃນ ອິສຣາເອນ. [8]ແລ້ວພວກເຖົ້າແກ່ຈະໄດ້ເອີ້ນ
ລາວມາເວົ້າຈາກັນ ຖ້າວ່າລາວຍັງບໍ່ຍອມແຕ່ງງານຢູ່. [9]ກໍໃຫ້ນາງໝ້າຍນັ້ນເຂົ້າໄປຫາລາວຕໍ່ໜ້າ
ພວກເຖົ້າແກ່ ດຶງເອົາເກີບຂອງລາວກີ່ງໜຶ່ງພ້ອມກັບຖົ່ມນໍ້າລາຍໃສ່ໜ້າຜູ້ນັ້ນ ແລະເວົ້າວ່າ ຜູ້ບໍ່
ຍອມສືບເຊື້ອສາຍໃຫ້ອ້າຍນ້ອງຜູ້ຕາຍກໍເປັນຢ່າງນີ້ແຫລະ [10]ແລ້ວຄົນທັງຫລາຍໃນ ອິສຣາເອນ
ຈະເອີ້ນຄອບຄົວນີ້ວ່າ ຄອບຄົວຂອງຜູ້ຖືກຖອດເກີບ.

[11]ຖ້າຊາຍສອງຄົນຜິດຖຽງທຸບຕີກັນ ແລະເມຍຂອງຊາຍຄົນໜຶ່ງເຂົ້າມາໃກ້ຈະຊ່ວຍຜົວຂອງ
ຕົນໃຫ້ພົ້ນຈາກມືຂອງຜູ້ທີ່ຕີ ແລະນາງຍື່ນມືອອກບີບຂອງລັບຂອງຜູ້ຊາຍຄົນນັ້ນ [12]ທ່ານຈົ່ງຕັດ
ມືຂອງນາງຖິ້ມເສຍ ຢ່າໃຫ້ຕາຂອງທ່ານສົງສານນາງ

[13]ທ່ານຢ່າມີລູກຕຸ້ມ[ກ] ສຳລັບຕາຊັ່ງຕ່າງກັນໄວ້ໃນຖົງ ຄືອັນໜຶ່ງໜັກອັນໜຶ່ງເບົາ [14]ໃນເຮືອນ
ຂອງທ່ານຢ່າໃຫ້ມີເຄື່ອງຕວງສອງຂະນິດ ຄືອັນໜຶ່ງໃຫຍ່ອັນໜຶ່ງນ້ອຍ [15]ທ່ານຈົ່ງມີລູກຕຸ້ມອັນ
ສົມບູນ ແລະທ່ຽງກົງ ແລະມີຖັງຕວງອັນສົມບູນ ແລະທ່ຽງກົງເພື່ອວ່າອາຍຸຂອງທ່ານຈະຍືນ
ຍາວໃນ ແຜ່ນດິນຊຶ່ງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງທ່ານປະທານ ແກ່ທ່ານ [16]ເພາະວ່າຜູ້ໃດທີ່
ເຮັດດັ່ງນີ້ ຄືທຸກຄົນທີ່ຄົດໂກງ ເປັນຜູ້ທີ່ໜ້າກຽດຊັງແດ່ ພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານ

## ພາລະໜ້າທີ່ຂອງພີ່ນ້ອງຝ່າຍຜູ້ຕາຍ

[17]ຈົ່ງລະນຶກເຖິງສິ່ງທີ່ຄົນ ອາມາເລັກ ເຮັດແກ່ທ່ານທັງຫລາຍຕາມທາງທີ່ທ່ານອອກຈາກ ເອ-
ຢິບ [18]ພວກເຂົາໄດ້ອອກມາພົບທ່ານຕາມທາງ ແລະໂຈມຕີພວກທີ່ຢູ່ສຸດທ້າຍ ຄືບັນດາຄົນທີ່
ອ່ອນກຳລັງທີ່ຢູ່ສຸດທ້າຍ ເມື່ອທ່ານອ່ອນເພຍເມື່ອຍແຮງ ພວກເຂົາບໍ່ໄດ້ຢຳເກງ ພຣະເຈົ້າ
[19]ເຊັ່ນນັ້ນ ເມື່ອພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານປະທານໃຫ້ທ່ານເຊົາເມື່ອຍຈາກບັນດາສັດຕູ
ທີ່ຢູ່ອ້ອມຂ້າງແລ້ວ ໃນແຜ່ນດິນທີ່ ພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານປະທານແກ່ທ່ານເປັນກຳ-
ມະສິດນັ້ນ ທ່ານທັງຫລາຍຈົ່ງທຳລາຍລ້າງຄົນ ອາມາເລັກ ຈາກຄວາມຊົງຈຳເສຍ ທ່ານທັງ-
ຫລາຍຢ່າໄດ້ລືມ”

# ບົດທີ 26

## ການທຳລາຍຄົນອາມາເລັກ

[1]ເມື່ອພວກທ່ານເຂົ້າໄປຍຶດຄອງແຜ່ນດິນນັ້ນ ທີ່ພຣະຜູ້ເປັນເຈົ້າຊົງປະທານໃຫ້ ແລະອາໄສ
ຢູ່ໃນແຜ່ນດິນນັ້ນແລ້ວ. [2]ແຕ່ລະຄົນຈົ່ງເອົາຜົນລະປູກແຕ່ລະຢ່າງທີ່ເກັບກ່ຽວມາທຳອິດ ໃສ່ກະ-
ຕ່ານຳໄປຖວາຍໄວ້ໃນສະຖານທີ່ສັກສິດ ຊຶ່ງເປັນບ່ອນທີ່ ພຣະຜູ້ເປັນເຈົ້າ ຂອງພວກທ່ານໄດ້ຊົງ
ເລືອກໄວ້ ເພື່ອຈະໄດ້ໄປນະມັດສະການພຣະນາມຂອງພຣະອົງ. [3]ແລ້ວເຂົ້າໄປຫາປະໂລຫິດຜູ້
ເຮັດໜ້າທີ່ຮັບຕ້ອນຢູ່ໃນເວລານັ້ນ ໃຫ້ເວົ້ານຳເພິ່ນວ່າ, “ບັດນີ້ ຂ້ານ້ອຍຍອມຮັບຕໍ່ພຣະຜູ້ເປັນ-
ເຈົ້າວ່າ ຂ້ານ້ອຍໄດ້ມາຢູ່ໃນແຜ່ນດິນທີ່ພຣະອົງຊົງສັນຍາໄວ້ ຕໍ່ບັນພະບູລຸດຂອງພວກຂ້ານ້ອຍ

[ກ]ໂຕ້ນຊິງ

ແລ້ວ ວ່າຈະມອບໃຫ້ພວກຂ້ານ້ອຍນັ້ນ.” 4ປະໂລຫິດຈະຮັບເອົາກະຕ່າຈາກທ່ານ ໄປວາງໄວ້ຕໍ່-
ໜ້າແທ່ນບູຊາແດ່ພຣະຜູ້ເປັນເຈົ້າ. 5ແລ້ວທ່ານຈຶ່ງເລົ່າເລື່ອງນີ້ຕໍ່ພຣະພັກພຣະຜູ້ເປັນເຈົ້າ ບັນ-
ພະບູລຸດຂອງຂ້ານ້ອຍເປັນຊາວອາຣາມ ເພິ່ນທ່ອງທ່ຽວໄປມາບໍ່ມີທີ່ຢູ່ເປັນຫລັກແຫລ່ງ ໄດ້ພາ
ຄອບຄົວໄປອາໄສຢູ່ປະເທດເອຢິບ ເມື່ອຢູ່ທີ່ນັ້ນກໍມີໜ້ອຍຄົນ ແຕ່ຕໍ່ມາໄດ້ກາຍເປັນຊົນຊາດ
ໃຫຍ່ທີ່ເຂັ້ມແຂງຊາດໜຶ່ງ. 6ຄົນເອຢິບໄດ້ເຮັດຕໍ່ພວກຂ້ານ້ອຍຢ່າງໂຫດຮ້າຍໄດ້ຂົ່ມເຫັງໃຫ້ເຮັດ
ວຽກໜັກຢ່າງທາດ. 7ຕໍ່ມາ ພວກຂ້ານ້ອຍໄດ້ຮ້ອງໄຫ້ຂໍຄວາມຊ່ອຍເຫລືອຈາກພຣະຜູ້ເປັນເຈົ້າ
ແຫ່ງບັນພະບູລຸດຂອງພວກຂ້ານ້ອຍ ພຣະອົງຊົງໄດ້ຍິນສຽງຮ້ອງໄຫ້ນັ້ນ ທັງໄດ້ເຫັນຄວາມລຳ-
ບາກ ຄວາມທຸກຍາກ ແລະເຄາະຮ້າຍຂອງພວກຂ້ານ້ອຍ. 8ແລ້ວໄດ້ຊົງເຮັດການອັດສະຈັນ
ແລະສິ່ງໜ້າຢ້ານດ້ວຍອຳນາດອັນຍິ່ງໃຫຍ່ຂອງພຣະອົງ ເພື່ອຊ່ອຍເອົາພວກຂ້ານ້ອຍອອກຈາກ
ເອຢິບ. 9ພຣະອົງໄດ້ຊົງນຳພາພວກຂ້ານ້ອຍມາຮອດບ່ອນນີ້ ແລະຊົງປະທານແຜ່ນດິນອັນອຸ-
ດົມສົມບູນນີ້ໃຫ້. 10ດັ່ງນັ້ນແຫລະ ຂ້ານ້ອຍຈຶ່ງນຳໝາກຜົນອັນທຳອິດທີ່ພຣະອົງປະທານໃຫ້ມາ
ຖວາຍແດ່ພຣະຜູ້ເປັນເຈົ້າ. ແລ້ວໃຫ້ປົງກະຕ່າລົງຖວາຍ ແລະຂາບໄຫວ້ ພຣະຜູ້ເປັນເຈົ້າຢູ່ທີ່
ນັ້ນ. 11ທ່ານກັບຄອບຄົວຕະຫລອດທັງຊາວຕ່າງດ້າວທີ່ອາໄສຢູ່ນຳ ຈົ່ງມ່ວນຊື່ນຍິນດີໃນຂອງດີ
ທີ່ພຣະຜູ້ເປັນເຈົ້າຊົງປະທານໃຫ້ນັ້ນ.

12-13ພືດຜົນໜຶ່ງສ່ວນສິບທີ່ເກັບກ່ຽວໄດ້ໃນທຸກໆ ສາມປີ ຈົ່ງເອົາໃຫ້ຄົນເລວີ ຄົນຕ່າງດ້າວ
ລູກກຳພ້າ ແລະແມ່ໝ້າຍເສຍ ເພື່ອພວກເຂົາຈະໄດ້ກິນອີ່ມໜຳສຳລານຕາມຄວາມຕ້ອງການ
ເມື່ອທ່ານໃຫ້ຂອງເຫລົ່ານີ້ແລ້ວຈົ່ງຂາບທູນພຣະຜູ້ເປັນເຈົ້າວ່າ ຂ້ານ້ອຍໄດ້ເອົາຂອງສັກສິດ
ອອກຈາກເຮືອນໝົດແລ້ວ ໄດ້ເອົາໃຫ້ຄົນເລວີ ຄົນຕ່າງດ້າວ ລູກກຳພ້າ ແລະແມ່ໝ້າຍຕາມທີ່
ພຣະອົງຊົງສັ່ງ ບໍ່ໄດ້ລະເມີດ ຫລືຫລົງລືມຄຳສັ່ງຂອງພຣະອົງໃນຂໍ້ໃດເລີຍ. 14ຂ້ານ້ອຍບໍ່ໄດ້ກິນ
ຂອງນີ້ເມື່ອເວລາໄວ້ທຸກ ບໍ່ໄດ້ເອົາສ່ວນໃດສຳລັບຄົນຕາຍ ຂ້ານ້ອຍໄດ້ເຊື່ອຟັງພຣະອົງຜູ້ຊົງ
ເປັນພຣະເຈົ້າ ແລ້ວໄດ້ປະຕິບັດທຸກໆສິ່ງຕາມທີ່ພຣະອົງຊົງສັ່ງໄວ້. 15ຂໍຈົ່ງທອດພຣະເນດລົງ
ມາຈາກສະຫວັນອັນບໍລິສຸດ ຂໍຊົງອວຍພອນໃຫ້ອິສຣາເອນໄພ່ພົນຂອງພຣະອົງ ແລະອວຍ-
ພອນແຜ່ນດິນອັນອຸດົມສົມບູນທີ່ພຣະອົງຊົງປະທານໃຫ້ພວກຂ້ານ້ອຍ ດັ່ງທີ່ພຣະອົງໄດ້ຊົງສັນ-
ຍາໄວ້ກັບບັນພະບູລຸດຂອງພວກຂ້ານ້ອຍນັ້ນ.

## ການຖວາຍຜົນເກັບກ່ຽວ

16ມື້ນີ້ ພຣະຜູ້ເປັນເຈົ້າຂອງທ່ານຊົງສັ່ງໃຫ້ເຮັດຕາມພຣະທຳ ແລະຮີດຄອງປະເພນີຂອງ
ພຣະອົງທັງໝົດ ສະນັ້ນ ຈົ່ງເຮັດຕາມຢ່າງສຸດຈິດສຸດໃຈ. 17ມື້ນີ້ ທ່ານໄດ້ຮັບເອົາພຣະຜູ້ເປັນ-
ເຈົ້າເປັນພຣະເຈົ້າຂອງທ່ານ ທັງໄດ້ສັນຍາວ່າຈະເຊື່ອຟັງ ຈະເຮັດຕາມກົດບັນຍັດ ແລະຮີດ-
ຄອງປະເພນີທັງໝົດຂອງພຣະອົງ. 18ມື້ນີ້ ພຣະຜູ້ເປັນເຈົ້າໄດ້ຊົງຮັບເອົາທ່ານເປັນໄພ່ພົນພິເສດ
ຂອງພຣະອົງຕາມທີ່ຊົງສັນຍາໄວ້ ພ້ອມທັງຊົງສັ່ງໃຫ້ເຮັດຕາມກົດບັນຍັດທັງໝົດຂອງພຣະອົງ.
19ແລ້ວພຣະອົງຈະຊົງເຮັດໃຫ້ຊາດຂອງທ່ານໃຫຍ່ກວ່າທຸກໆ ຊາດທີ່ໄດ້ສ້າງຂຶ້ນມາ ທ່ານຈະ
ເປັນໄພ່ພົນຜູ້ບໍລິສຸດຂອງພຣະອົງ ຕາມທີ່ຊົງສັນຍາໄວ້ ແລະທັງຈະເປັນຜູ້ນຳເອົາກຽດຕິຍົດ
ແລະຊື່ສຽງມາສູ່ພຣະນາມຂອງພຣະອົງດ້ວຍ.”

# ບົດທີ 27

## ໄພ່ພົນພິເສດຂອງພຣະຜູ້ເປັນເຈົ້າ

1ໂມເຊ ແລະພວກຜູ້ໃຫຍ່ຂອງຄົນ ອິສຣາເອນ ໄດ້ບອກປະຊາຊົນວ່າ “ຈົ່ງຖືຮັກສາພຣະບັນຍັດ
ທັງໝົດຊຶ່ງຂ້າພະເຈົ້າສັ່ງທ່ານທັງຫລາຍໃນມື້ນີ້ 2ໃນມື້ທີ່ທ່ານທັງຫລາຍຈະຂ້າມແມ່ນ້ຳຢໍແດນ
ເຂົ້າສູ່ແຜ່ນດິນຊຶ່ງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງທ່ານປະທານແກ່ທ່ານ ທ່ານຈົ່ງຕັ້ງສິລາກ້ອນ
ໃຫຍ່ໆຂຶ້ນ ເອົາປູນໂບກໄວ້ 3ແລ້ວທ່ານຈົ່ງຈາລຶກບັນດາຖ້ອຍຄຳຂອງພຣະບັນຍັດນີ້ໄວ້ເທິງນັ້ນ
ເມື່ອທ່ານຂ້າມໄປເພື່ອເຂົ້າແຜ່ນດິນຊຶ່ງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງທ່ານປະທານແກ່ທ່ານ
ເປັນແຜ່ນດິນຊຶ່ງມີນ້ຳນົມ ແລະນ້ຳເຜິ້ງໄຫລບໍລິບູນ ດັ່ງທີ່ພຣະຜູ້ເປັນເຈົ້າ ພຣະເຈົ້າ ແຫ່ງບັນ-
ພະບູລຸດຂອງທ່ານໄດ້ຊົງສັນຍາໄວ້ກັບທ່ານ 4ສະນັ້ນ ເມື່ອທ່ານຂ້າມແມ່ນ້ຳຢໍແດນໄປແລ້ວ
ເທິງພູເຂົາເອບານທ່ານຈົ່ງຕັ້ງສິລາເຫລົ່ານີ້ຕາມເລື່ອງທີ່ຂ້າພະເຈົ້າສັ່ງທ່ານໃນມື້ນີ້ ແລ້ວຈົ່ງໂບກ
ດ້ວຍປູນ 5ແລະທ່ານຈົ່ງສ້າງແທ່ນບູຊາແດ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານຢູ່ບ່ອນນັ້ນ ເປັນ
ແທ່ນສິລາ ຢ່າໃຊ້ເຄື່ອງມືເຫລັກຕັດສິລານັ້ນ 6ທ່ານຈົ່ງສ້າງແທ່ນບູຊາແດ່ພຣະຜູ້ເປັນເຈົ້າພຣະ-
ເຈົ້າຂອງທ່ານດ້ວຍສິລາທີ່ບໍ່ຕ້ອງຕົກແຕ່ງ ແລະທ່ານຈົ່ງຖວາຍເຄື່ອງເຜົາບູຊາເທິງແທ່ນນັ້ນແດ່
ພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານ 7ທ່ານຈົ່ງຖວາຍເພື່ອຄວາມສາມັກຄີ ແລະກິນຢູ່ບ່ອນນັ້ນ
ແລະທ່ານຈົ່ງມ່ວນຊື່ນຕໍ່ພຣະພັກພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານ 8ແລະທ່ານຈົ່ງຈາລຶກບັນ-
ດາຖ້ອຍຄຳຂອງພຣະບັນຍັດນີ້ເທິງສິລານັ້ນຢ່າງຊັດເຈນ”

## ຈົ່ງຈາລຶກພຣະບັນຍັດເທິງສິລາກ້ອນໃຫຍ່ ແລະຕັ້ງໄວ້ເທິງພູເຂົາເອບານ

9ໂມເຊ ແລະປະໂລຫິດຄົນ ເລວີ ໄດ້ກ່າວແກ່ຄົນ ອິສຣາເອນ ທັງຫລາຍວ່າ “ໂອ ອິສຣາເອນ
ຈົ່ງງຽບ ແລະສະດັບຟັງ ມື້ນີ້ທ່ານທັງຫລາຍໄດ້ເປັນປະຊາຊົນຂອງ ພຣະຜູ້ເປັນເຈົ້າ ພຣະເຈົ້າ
ຂອງທ່ານ 10ເຊັ່ນນັ້ນ ທ່ານຈົ່ງຟັງພຣະສຸລະສຽງຂອງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງທ່ານ ຄືຖື
ຮັກສາພຣະບັນຍັດ ແລະກົດເກນຂອງພຣະອົງ ຊຶ່ງຂ້າພະເຈົ້າສັ່ງທ່ານໄວ້ໃນມື້ນີ້” 11ໃນມື້ດຽວ
ກັນນັ້ນ ໂມເຊ ໄດ້ສັ່ງເນັ້ນປະຊາຊົນວ່າ 12“ເມື່ອທ່ານທັງຫລາຍຂ້າມແມ່ນ້ຳຢໍແດນ ແລ້ວ ໃຫ້ຄົນຕໍ່
ໄປນີ້ຢືນເທິງພູເຂົາ ເກຣີຊີມ ກ່າວຄຳອວຍພອນແກ່ປະຊາຊົນ ຄືຊີເມໂອນ ເລວີ ຢູດາ ອິດຊາ-
ຄາ ໂຢເຊັບ ແລະ ເບັນຢາມິນ 13ແລະໃຫ້ຄົນຕໍ່ໄປນີ້ຢືນສາບແຊ່ງຢູ່ເທິງພູເຂົາ ເອບານ ຄືຣູເບັນ
ຄາດ ອາເຊ ເຊບູລູນ ດານ ແລະ ນັບທາລີ

14ແລະໃຫ້ຄົນ ເລວີ ກ່າວປະກາດແກ່ຄົນ ອິສຣາເອນ ທັງປວງດ້ວຍສຽງດັ່ງວ່າ 15‘ຜູ້ໃດທີ່ເຮັດ
ຮູບເຄົາລົບເປັນຮູບແກະສະຫລັກ ຫລືຮູບຫລໍ່ຊຶ່ງເປັນສິ່ງທີ່ໜ້າກຽດຊັງແດ່ພຣະຜູ້ເປັນເຈົ້າ ເປັນ
ສິ່ງທີ່ເຮັດດ້ວຍຊ່າງຝີມື ແລະຕັ້ງໄວ້ຢ່າງລັບໆ ໃຫ້ຜູ້ນັ້ນຖືກສາບແຊ່ງ’ ໃຫ້ປະຊາຊົນທັງປວງ
ຕອບພ້ອມກັນ ແລະກ່າວວ່າ ‘ອາແມນ’ 16‘ຜູ້ໃດໝິ່ນປະໝາດພໍ່ຂອງຕົນ ຫລືແມ່ຂອງຕົນ ໃຫ້ຜູ້
ນັ້ນຖືກສາບແຊ່ງ’ ໃຫ້ປະຊາຊົນທັງປວງກ່າວພ້ອມກັນວ່າ ‘ອາແມນ’ 17‘ຜູ້ໃດທີ່ຍົກຍ້າຍເສົາ
ເຂດແດນຂອງເພື່ອນບ້ານ ໃຫ້ຜູ້ນັ້ນຖືກສາບແຊ່ງ’ ໃຫ້ປະຊາຊົນທັງປວງກ່າວພ້ອມກັນວ່າ ‘ອາ
ແມນ’ 18‘ຜູ້ໃດເຮັດໃຫ້ຄົນຕາບອດຫລົງທາງ ໃຫ້ຜູ້ນັ້ນຖືກສາບແຊ່ງ’ ໃຫ້ປະຊາຊົນທັງປວງກ່າວ

ພ້ອມກັນວ່າ 'ອາແມນ' [19]'ຜູ້ໃດເຮັດໃຫ້ເສຍຄວາມຍຸດຕິທຳອັນຄວນໄດ້ແກ່ຄົນຕ່າງດ້າວ ລູກ
ກຳພ້າພໍ່ ແລະແມ່ໝ້າຍ ໃຫ້ຜູ້ນັ້ນຖືກສາບແຊ່ງ' ໃຫ້ປະຊາຊົນທັງປວງກ່າວພ້ອມກັນວ່າ 'ອາ
ແມນ' [20]'ຜູ້ໃດສົມສູ່ກັບເມຍຂອງພໍ່ຕົນ ເພາະວ່າລາວໄດ້ເປີດຜ້າຂອງນາງຜູ້ເປັນຂອງພໍ່ ໃຫ້ຜູ້
ນັ້ນຖືກສາບແຊ່ງ' ໃຫ້ປະຊາຊົນທັງປວງກ່າວພ້ອມກັນວ່າ 'ອາແມນ' [21]'ຜູ້ໃດສົມສູ່ກັບສັດເດຍ-
ລະສານຊະນິດໃດໆກໍຕາມ ໃຫ້ຜູ້ນັ້ນຖືກສາບແຊ່ງ' ໃຫ້ປະຊາຊົນທັງປວງກ່າວພ້ອມກັນວ່າ 'ອາ
ແມນ' [22]'ຜູ້ໃດທີ່ສົມສູ່ກັບເອື້ອຍ ຫລືນ້ອງສາວ ຈະເປັນລູກສາວຂອງພໍ່ ຫລືລູກສາວຂອງແມ່
ຕົນກໍຕາມ ໃຫ້ຜູ້ນັ້ນຖືກສາບແຊ່ງ' ໃຫ້ປະຊາຊົນທັງປວງກ່າວພ້ອມກັນວ່າ 'ອາແມນ' [23]'ຜູ້ໃດ
ສົມສູ່ກັບແມ່ເຖົ້າຂອງຕົນ ໃຫ້ຜູ້ນັ້ນຖືກສາບແຊ່ງ' ໃຫ້ປະຊາຊົນທັງປວງກ່າວພ້ອມກັນວ່າ 'ອາ
ແມນ' [24]'ຜູ້ໃດຂ້າເພື່ອນບ້ານຂອງຕົນຢ່າງລັບໆ ໃຫ້ຜູ້ນັ້ນຖືກສາບແຊ່ງ' ໃຫ້ປະຊາຊົນທັງປວງ
ກ່າວພ້ອມກັນວ່າ 'ອາແມນ' [25]'ຜູ້ໃດຮັບຄ່າຈ້າງໃຫ້ຂ້າຄົນທີ່ບໍ່ໄດ້ເຮັດຜິດ ໃຫ້ຜູ້ນັ້ນຖືກສາບ
ແຊ່ງ' ໃຫ້ປະຊາຊົນທັງປວງກ່າວພ້ອມກັນວ່າ 'ອາແມນ' [26]'ຜູ້ໃດບໍ່ຖືຮັກສາບັນດາຖ້ອຍຄຳແຫ່ງ
ພຣະບັນຍັດນີ້ໂດຍການບໍ່ປະຕິບັດຕາມ ໃຫ້ຜູ້ນັ້ນຖືກສາບແຊ່ງໃຫ້ປະຊາຊົນທັງປວງກ່າວພ້ອມ
ກັນວ່າ 'ອາແມນ'"

# ບົດທີ 28

## ການກ່າວເຖິງພຣະພອນ ແລະຄຳສາບແຊ່ງຕ່າງໆ ເທິງພູເຂົາເກຣິຊິມແລະພູເຂົາເອບານ

[1]"ຕໍ່ມາ ຖ້າທ່ານທັງຫລາຍ ເຊື່ອຟັງພຣະສຸລະສຽງຂອງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງທ່ານ
ແລະ ເອົາໃຈໃສ່ ປະຕິບັດ ຕາມ ບັນດາ ພຣະບັນຍັດ ຂອງ ພຣະອົງ ຊຶ່ງ ຂ້າພະເຈົ້າ ສັ່ງ ທ່ານ ໃນ ມື້ນີ້
ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງທ່ານ ຈະຊົງຕັ້ງທ່ານໄວ້ໃຫ້ສູງກວ່າບັນດາປະຊາຊາດທັງຫລາຍ
ທົ່ວໂລກ [2]ພຣະພອນເຫລົ່ານີ້ຈະຕາມມາທັນທີ ຖ້າທ່ານທັງຫລາຍຟັງພຣະສຸລະສຽງຂອງ ພຣະ-
ຜູ້ເປັນເຈົ້າ ພຣະເຈົ້າ ຂອງທ່ານ [3]ທ່ານທັງຫລາຍຈະຮັບພຣະພອນໃນເມືອງ ທ່ານທັງຫລາຍຈະ
ຮັບພຣະພອນໃນທົ່ງນາ [4]ພົງພັນຂອງທ່ານ ຜົນລະປູກແຫ່ງພື້ນດິນຂອງທ່ານ ແລະພົງພັນແຫ່ງ
ສັດຂອງທ່ານຈະຮັບພຣະພອນ ຄືຝູງງົວຂອງທ່ານທີ່ເພີ່ມຂຶ້ນ ຝູງແກະຂອງທ່ານທີ່ເພີ່ມທະວີຂຶ້ນ
[5]ກະຕ່າຂອງທ່ານ ແລະຮາງນວດແປ້ງຂອງທ່ານຈະຮັບພຣະພອນ [6]ທ່ານຈະຮັບພຣະພອນເມື່ອ
ທ່ານເຂົ້າມາ ແລະທ່ານຈະຮັບພຣະພອນເມື່ອທ່ານອອກໄປ [7]ພຣະຜູ້ເປັນເຈົ້າ ຈະຊົງເຮັດໃຫ້
ສັດຕູຜູ້ລຸກຂຶ້ນຕໍ່ສູ້ທ່ານພ່າຍແພ້ຕໍ່ໜ້າທ່ານ ພວກເຂົາຈະອອກມາຕໍ່ສູ້ທ່ານທາງໜຶ່ງ ແລະໜີໃຫ້
ພົ້ນໜ້າທ່ານເຈັດທາງ [8]ພຣະຜູ້ເປັນເຈົ້າ ຈະຊົງບັນຊາພຣະພອນໃຫ້ແກ່ເລົ້າເຂົ້າຂອງທ່ານ ແລະ
ບັນດາກິດຈະການທີ່ມືທ່ານເຮັດ ແລະພຣະອົງຈະຊົງອຳນວຍພຣະພອນແກ່ທ່ານໃນແຜ່ນດິນຊຶ່ງ
ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງທ່ານປະທານແກ່ທ່ານ [9]ພຣະຜູ້ເປັນເຈົ້າ ຈະຊົງຕັ້ງທ່ານໃຫ້ເປັນ
ຊົນຊາດບໍລິສຸດແດ່ພຣະອົງ ດັ່ງທີ່ພຣະອົງຊົງປະຕິຍານແກ່ທ່ານແລ້ວຖ້າທ່ານຖືຮັກສາພຣະບັນ-
ຍັດຂອງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງທ່ານ ແລະດຳເນີນໃນພຣະບັນຍັດຂອງພຣະອົງ [10]ແລະ
ຊົນຊາດທັງຫລາຍໃນໂລກຈະເຫັນວ່າພວກເຂົາເອີ້ນທ່ານຕາມພຣະນາມ ພຣະຜູ້ເປັນເຈົ້າ ແລະ

ພວກເຂົາທັງຫລາຍຈະຢ້ານກົວທ່ານ 11ພຣະຜູ້ເປັນເຈົ້າຈະຊົງເຮັດໃຫ້ທ່ານທັງຫລາຍອຸດົມສົມ-
ບູນໄປດ້ວຍເຊື້ອສາຍແຫ່ງຕົວຂອງທ່ານ ເຊື້ອສາຍຂອງຝູງສັດຂອງທ່ານ ແລະຜົນລະປູກແຫ່ງ
ພື້ນດິນຂອງທ່ານ ໃນແຜ່ນດິນຊຶ່ງພຣະຜູ້ເປັນເຈົ້າຊົງປະຕິຍານແກ່ບັນພະບູລຸດວ່າຈະໃຫ້ທ່ານ
ນັ້ນ 12ພຣະຜູ້ເປັນເຈົ້າຈະຊົງເຮັດໃຫ້ຄັງອັນອຸດົມສົມບູນຂອງພຣະອົງໃນທ້ອງຟ້າ ແລະປະທານ
ຝົນແກ່ແຜ່ນດິນຂອງທ່ານຕາມລະດູການ ແລະຊົງອຳນວຍພຣະພອນແກ່ກິດຈະການຈາກມື
ຂອງທ່ານ ແລະທ່ານຈະໃຫ້ປະຊາຊາດຫລາຍປະຊາຊາດທີ່ຂໍຢືມ ແຕ່ທ່ານຈະບໍ່ຂໍຢືມຈາກພວກ
ເຂົາ 13ຖ້າທ່ານເຊື່ອຟັງພຣະບັນຍັດຂອງພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານ ຊຶ່ງຂ້າພະເຈົ້າ
ບັນຊາທ່ານໃນມື້ນີ້ ແລະລະວັງທີ່ຈະເຮັດຕາມ ພຣະຜູ້ເປັນເຈົ້າຈະຊົງເຮັດໃຫ້ທ່ານເປັນຫົວ ບໍ່
ແມ່ນເປັນຫາງ ຈະຊົງເຮັດໃຫ້ສູງຂຶ້ນ ບໍ່ແມ່ນໃຫ້ຕໍ່າລົງ 14ແລະທ່ານຈະບໍ່ຫັນເຫໄປຈາກຖ້ອຍ
ຄຳຊຶ່ງຂ້າພະເຈົ້າສັ່ງທ່ານໃນມື້ນີ້ໂດຍຫັນໄປທາງຂວາມື ຫລືທາງຊ້າຍມື ໄປຕິດຕາມບົວລະບັດ
ພະອື່ນ

## ຄົນທີ່ຟັງຄວາມພຣະເຈົ້າຈະໄດ້ຮັບພຣະພອນຍິ່ງໃຫຍ່

15ແຕ່ຕໍ່ມາ ຖ້າທ່ານບໍ່ຟັງພຣະສຸລະສຽງຂອງພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານ ແລະບໍ່ໃສ່-
ໃຈປະຕິບັດຕາມພຣະບັນຍັດ ແລະກົດເກນທັງໝົດຂອງພຣະອົງ ຊຶ່ງຂ້າພະເຈົ້າສັ່ງທ່ານໃນມື້ນີ້
ແລ້ວບັນດາຄຳສາບແຊ່ງເຫລົ່ານີ້ຈະຕາມມາທັນທີ 16ທ່ານທັງຫລາຍຈະຮັບຄຳສາບແຊ່ງໃນ
ເມືອງ ທ່ານທັງຫລາຍຈະຮັບຄຳສາບແຊ່ງໃນທົ່ງນາ 17ກະຕ່າຂອງທ່ານ ແລະຮາງນວດແປ້ງ
ຂອງທ່ານຈະຮັບຄຳສາບແຊ່ງ 18ເຊື້ອສາຍແຫ່ງຕົວຂອງທ່ານ ຜົນລະປູກແຫ່ງພື້ນດິນຂອງທ່ານ
ຝູງງົວຂອງທ່ານທີ່ເພີ່ມຂຶ້ນ ຝູງແກະຂອງທ່ານທີ່ເພີ່ມຂຶ້ນຈະຮັບຄຳສາບແຊ່ງ 19ທ່ານຈະຮັບຄຳ
ສາບແຊ່ງເມື່ອທ່ານເຂົ້າມາ ແລະທ່ານຈະຮັບຄຳສາບແຊ່ງເມື່ອທ່ານອອກໄປ

20ພຣະຜູ້ເປັນເຈົ້າຈະຊົງບັນດານໃຫ້ຄຳສາບແຊ່ງ ຄວາມວຸ້ນວາຍ ແລະການຕຳໜິມີຂຶ້ນແກ່
ບັນດາກິດຈະການທີ່ມືທ່ານເຮັດຈົນທ່ານຖືກທຳລາຍ ແລະຈິບຫາຍຢ່າງວ່ອງໄວ ເປັນຍ້ອນ
ຄວາມຊົ່ວຊຶ່ງທ່ານໄດ້ເຮັດ ເພາະວ່າທ່ານໄດ້ປະຖິ້ມເຮົາ 21ພຣະຜູ້ເປັນເຈົ້າຈະຊົງບັນດານໃຫ້
ພະຍາດຮ້າຍຕິດພັນທ່ານ ຈົນພຣະອົງຈະຊົງເຜົາຜານທ່ານໃຫ້ໝົດໄປຈາກແຜ່ນດິນ ຊຶ່ງທ່ານ
ເຂົ້າໄປຍຶດຄອງນັ້ນ 22ພຣະຜູ້ເປັນເຈົ້າຈະຊົງຊ້ຽນຕີທ່ານດ້ວຍຄວາມຈ່ອຍຜອມ ແລະດ້ວຍການ
ເຈັບໄຂ້ ການອັກເສບ ຄວາມຮ້ອນຢ່າງຮຸນແຮງ ດ້ວຍດາບ ດ້ວຍພາຍຸແຮງກ້າ ດ້ວຍໂຣກລະ-
ບາດ ແລະສິ່ງເຫລົ່ານີ້ຈະຕິດຕາມທ່ານໄປຈົນທ່ານຈິບຫາຍ 23ແລະຟ້າສະຫວັນທີ່ຢູ່ເທິງຫົວຂອງ
ທ່ານຈະເປັນທອງເຫລືອງ ແລະແຜ່ນດິນທີ່ຢູ່ກ້ອງທ່ານຈະເປັນເຫລັກ 24ພຣະຜູ້ເປັນເຈົ້າຈະຊົງ
ບັນດານໃຫ້ຝົນໃນແຜ່ນດິນຂອງທ່ານເປັນຝຸ່ນ ລົງມາຈາກອາກາດຢູ່ເທິງທ່ານທັງຫລາຍຈົນກວ່າ
ທ່ານຈະຖືກທຳລາຍ

25ພຣະຜູ້ເປັນເຈົ້າຈະຊົງເຮັດໃຫ້ທ່ານພ່າຍແພ້ຕໍ່ໜ້າສັດຕູຂອງທ່ານ ທ່ານຈະອອກໄປຕໍ່ສູ້
ພວກເຂົາທາງດຽວ ແຕ່ຈະໜີໃຫ້ພົ້ນໜ້າພວກເຂົາເຈັດທາງ ແລະທ່ານທັງຫລາຍຈະຖືກຖອນ
ອອກໄປຢູ່ຕາມບັນດາລາຊະອານາຈັກທົ່ວໂລກ 26ຊາກສົບຂອງທ່ານທັງຫລາຍຈະເປັນອາຫານ
ຂອງນົກທັງຫລາຍໃນອາກາດ ແລະສຳລັບສັດປ່າໃນໂລກ ແລະຈະບໍ່ມີຜູ້ໃດຂັບໄລ່ຝູງສັດ

ເຫລົ່ານັ້ນໄປ 27ພຣະຜູ້ເປັນເຈົ້າຈະຊົງຊົງໂຕທ່ານດ້ວຍຕຸ່ມຝີ ດັ່ງທີ່ເຮັດກັບເອຢິບ ດ້ວຍພະ-
ຍາດຂີ້ທິດ ແລະດ້ວຍພະຍາດຂີ້ກາກ ຊຶ່ງຈະຮັກສາບໍ່ໄດ້ 28ພຣະຜູ້ເປັນເຈົ້າຈະຊົງຊົງໂຕທ່ານ
ດ້ວຍພະຍາດແປກໆ ພະຍາດຕາບອດ ແລະໃຫ້ຈິດໃຈວຸ້ນວາຍ 29ທ່ານຈະຕ້ອງຄຳໄປໃນເວລາ
ກາງເວັນ ຄືຄົນຕາບອດຄຳໄປໃນຄວາມມືດ ແລະທ່ານຈະບໍ່ມີຄວາມຈະເລີນໃນຫົນທາງຂອງ
ທ່ານ ທ່ານຈະຖືກບີບຄັ້ນ ແລະຖືກປຸ້ນຈີ້ຢູ່ສະເໝີ ແລະຈະບໍ່ມີໃຜຊ່ວຍທ່ານໄດ້ເລີຍ 30ທ່ານຈະ
ໝັ້ນຜູ້ຍິງຄົນໜຶ່ງໄວ້ເປັນເມຍ ແລະຊາຍອື່ນຈະເຂົ້າໄປສົມສູ່ກັບນາງ ທ່ານຈະກໍ່ສ້າງເຮືອນ ແຕ່
ຈະບໍ່ໄດ້ອາໄສຢູ່ໃນນັ້ນ ທ່ານຈະປູກສວນອະງຸ່ນ ແຕ່ທ່ານຈະບໍ່ໄດ້ເກັບໝາກອະງຸ່ນນັ້ນເຂົ້າມາ
31ຄົນຈະຂ້າງົວຂອງທ່ານຕໍ່ໜ້າຕໍ່ຕາທ່ານ ທ່ານຈະບໍ່ໄດ້ກິນຊີ້ນງົວນັ້ນ ພວກເຂົາຈະມາຍາດ
ແຍ່ງເອົາລາໄປຕໍ່ໜ້າຕໍ່ຕາທ່ານ ແລະພວກເຂົາຈະບໍ່ເອົາກັບຄືນມາໃຫ້ທ່ານ ຝູງແບ້ແກະຂອງ
ທ່ານຈະຕ້ອງເອົາໄປໃຫ້ສັດຕູຂອງທ່ານ ແລະຈະບໍ່ມີໃຜຊ່ວຍທ່ານໄດ້ເລີຍ 32ພວກເຂົາຈະເອົາ
ລູກຊາຍ ແລະລູກສາວຂອງທ່ານໄປໃຫ້ແກ່ປະຊາຊາດອື່ນ ສ່ວນຕາຂອງທ່ານຈະເບິ່ງ ແລະມືດ
ມົວລົງດ້ວຍຄວາມອາໄລອາວອນຕະຫລອດເວລາ ອຳນາດໃນມືຂອງທ່ານກໍບໍ່ສາມາດຈະປ້ອງ
ກັນໄດ້ 33ຊົນຊາດທີ່ທ່ານບໍ່ເຄີຍຮູ້ຈັກມາແຕ່ກ່ອນຈະມາກິນພືດຜົນແຫ່ງແຜ່ນດິນຂອງທ່ານ
ແລະກິນຜົນງານທັງປວງຂອງທ່ານ ພວກເຂົາຈະບີບຄັ້ນ ແລະກົດຂີ່ທ່ານສະເໝີໄປ 34ດັ່ງນັ້ນ
ພາບທີ່ທ່ານເຫັນຈຶ່ງຈະເຮັດໃຫ້ທ່ານບ້າຄັ່ງໄປ 35ພຣະຜູ້ເປັນເຈົ້າຈະຊົງຊົງໂຕທ່ານດ້ວຍຕຸ່ມຝີ
ຮ້າຍທີ່ຫົວເຂົ່າ ແລະທີ່ຂາ ຊຶ່ງທ່ານຈະຮັກສາໃຫ້ຫາຍບໍ່ໄດ້ ເປັນຕັ້ງແຕ່ຝ່າຕີນຈົນຮອດຂະໝ່ອມ
ຂອງທ່ານ 36ພຣະຜູ້ເປັນເຈົ້າຈະຊົງນຳທ່ານ ແລະກະສັດຜູ້ທີ່ທ່ານແຕ່ງຕັ້ງໄວ້ເໜືອທ່ານນັ້ນ ໄປ
ຍັງປະຊາຊາດຊຶ່ງທ່ານແລະບັນພະບູລຸດຂອງທ່ານບໍ່ຮູ້ຈັກມາກ່ອນ ໃນທີ່ນັ້ນທ່ານຈະບົວລະບັດ
ພະອື່ນທີ່ເຮັດດ້ວຍໄມ້ ແລະດ້ວຍຫີນ 37ທ່ານຈະເປັນທີ່ໜ້າຕົກໃຈ ເປັນຄຳສຸພາສິດ ເປັນທີ່ນິນ-
ທາທ່າມກາງຊົນຊາດທັງຫລາຍທີ່ພຣະຜູ້ເປັນເຈົ້າຊົງພາທ່ານໄປນັ້ນ

38ທ່ານຈະຕ້ອງເອົາພືດໄປຫວ່ານໄວ້ໃນນາຫລາຍ ແລະເກັບຜົນລະປູກເຂົ້າມາແຕ່ໜ້ອຍດຽວ
ເພາະວ່າຕັກກະແຕນໃຫຍ່ຈະກັດກິນເສຍ 39ທ່ານຈະປູກສວນຕົ້ນອະງຸ່ນ ແລະບົວລະບັດນັ້ນ
ແຕ່ທ່ານຈະບໍ່ໄດ້ດື່ມນ້ຳອະງຸ່ນ ຫລືເກັບຜົນລະປູກເຂົ້າມາ ເພາະວ່າໂຕໜອນຈະກິນມັນເສຍ
40ທ່ານຈະມີຕົ້ນໝາກກອກເທດຢູ່ທົ່ວອານາເຂດຂອງທ່ານ ແຕ່ທ່ານຈະບໍ່ໄດ້ນ້ຳມັນມາຊຳລະໂຕ
ທ່ານ ເພາະວ່າໝາກກອກເທດຂອງທ່ານຈະຫລົ່ນລົງ 41ທ່ານຈະໃຫ້ກຳເນີດລູກຊາຍ ແລະລູກ
ສາວ ແຕ່ຈະບໍ່ເປັນຂອງທ່ານ ເພາະວ່າເຂົາຈະຕົກໄປເປັນຊະເລີຍ 42ຕົ້ນໄມ້ທັງຫລາຍຂອງ
ທ່ານແລະຜົນລະປູກຈາກພື້ນດິນຂອງທ່ານນັ້ນ ຕັກແຕນຈະຖືກຳມະສິດໝົດ 43ຄົນຕ່າງດ້າວຊຶ່ງ
ຢູ່ທ່າມກາງທ່ານ ຈະສູງຂຶ້ນໄປເໜືອທ່ານທຸກໆເທື່ອ ແລະທ່ານຈະຕ່ຳລົງທຸກໆເທື່ອ 44ພວກ
ເຂົາຈະໃຫ້ທ່ານທັງຫລາຍຢືມເຄື່ອງຂອງຈາກພວກເຂົາໄດ້ ແລະທ່ານຈະບໍ່ມີຫຍັງໃຫ້ພວກເຂົາ
ຢືມ ພວກເຂົາຈະເປັນຫົວ ແລະທ່ານຈະເປັນຫາງ

45ຫລາຍກວ່ານັ້ນ ຄຳສາບແຊ່ງທັງໝົດນີ້ຈະຕາມມາຫາທ່ານ ແລະຕາມທັນທ່ານຈົນກວ່າ
ທ່ານຈະຖືກທຳລາຍ ເພາະວ່າທ່ານບໍ່ຟັງພຣະສຸລະສຽງຂອງພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານ
ໂດຍບໍ່ໄດ້ຖືຮັກສາພຣະບັນຍັດ ແລະກົດເກນຂອງພຣະອົງຊຶ່ງພຣະອົງຊົງສັ່ງທ່ານໄວ້ນັ້ນ 46ສິ່ງ

ເຫລົ່ານີ້ຈະເປັນໝາຍສຳຄັນ ແລະການອັດສະຈັນຢູ່ເໜືອທ່ານ ແລະເໜືອເຊື້ອສາຍຂອງທ່ານ
ເປັນນິດ
[47]ເພາະວ່າ ທ່ານ ບໍ່ ໄດ້ ບົວລະບັດ **ພຣະຜູ້ເປັນເຈົ້າ ພຣະເຈົ້າ** ຂອງ ທ່ານ ດ້ວຍ ຄວາມ ມ່ວນຊື່ນ
ແລະໃຈຍິນດີ ເພາະວ່າເຫດມີສິ່ງສາລະພັດບໍລິບູນ [48]ສະນັ້ນ ທ່ານຈຶ່ງຕ້ອງບົວລະບັດສັດຕູຂອງ
ທ່ານ ຊຶ່ງ **ພຣະຜູ້ເປັນເຈົ້າ** ຈະຊົງໃຊ້ມາຕໍ່ສູ້ທ່ານດ້ວຍຄວາມຫິວແລະກະຫາຍ ເປືອຍກາຍ ແລະ
ຂັດສົນທຸກຢ່າງ ແລະພຣະອົງຈະຊົງວາງແອກເຫລັກເທິງຄໍຂອງທ່ານ ຈົນກວ່າພຣະອົງຈະທຳ-
ລາຍທ່ານໝົດ [49]**ພຣະຜູ້ເປັນເຈົ້າ** ຈະຊົງນຳປະຊາຊາດໜຶ່ງມາຕໍ່ສູ້ກັບທ່ານຈາກທາງໄກ ຈາກທີ່
ສຸດປາຍແຜ່ນດິນໂລກ ໄວຄືນົກອິນຊີບິນມາ ເປັນປະຊາຊາດທີ່ທ່ານບໍ່ຮູ້ຈັກພາສາຂອງພວກເຂົາ
[50]ເປັນປະຊາຊາດທີ່ມີໜ້າຕາໜ້າຢ້ານ ຄືຜູ້ຊຶ່ງບໍ່ເຄົາລົບຄົນແກ່ ແລະບໍ່ເມດຕາໜຸ່ມສາວ [51]ແລະ
ຈະກິນລູກຂອງຝູງສັດຂອງທ່ານ ແລະພືດຜົນຈາກພື້ນດິນຂອງທ່ານ ຈົນທ່ານຈະຖືກທຳລາຍ
ທັງພວກເຂົາຈະບໍ່ເຫລືອເຂົ້າ ນ້ຳອະງຸ່ນ ຫລືນ້ຳມັນ ລູກງົວ ຫລືລູກແກະອ່ອນໄວ້ໃຫ້ທ່ານ ຈົນ
ກວ່າພວກເຂົາຈະເຮັດໃຫ້ທ່ານຈິບຫາຍໄປ [52]ພວກເຂົາຈະລ້ອມທ່ານໄວ້ທຸກປະຕູເມືອງ ຈົນກຳ-
ແພງສູງ ແລະເຂັ້ມແຂງຊຶ່ງທ່ານໄວ້ວາງໃຈນັ້ນພັງລົງທົ່ວ ແຜ່ນດິນຂອງທ່ານ ຄືພວກເຂົາຈະ
ລ້ອມທ່ານໄວ້ທຸກປະຕູເມືອງທົ່ວແຜ່ນດິນຂອງທ່ານ ຊຶ່ງ **ພຣະຜູ້ເປັນເຈົ້າ ພຣະເຈົ້າ** ຂອງທ່ານປະ-
ທານ ແກ່ທ່ານ [53]ທ່ານຈະຕ້ອງກິນພົງພັນຂອງທ່ານເອງເປັນອາຫານ ຄືຊີ້ນລູກຊາຍ ແລະລູກ
ສາວຂອງທ່ານຜູ້ຊຶ່ງ **ພຣະຜູ້ເປັນເຈົ້າ ພຣະເຈົ້າ** ຂອງທ່ານປະທານ ແກ່ທ່ານ ຍ້ອນການປິດລ້ອມ
ແລະຄວາມທຸກລຳບາກຊຶ່ງສັດຕູຂອງທ່ານມາມອບ ໃຫ້ທ່ານທັງຫລາຍນັ້ນ [54]ຜູ້ຊາຍ ໃນໝູ່ພວກ
ທ່ານທັງຫລາຍຈະຫວງອາຫານຕໍ່ພີ່ນ້ອງຂອງຕົນ ຕໍ່ເມຍທີ່ຢູ່ໃນອ້ອມເອິກຂອງຕົນ ແລະຕໍ່ລູກໆ
ຄົນສຸດທ້າຍທີ່ເຫລືອຢູ່ກັບຕົນ [55]ຈົນພວກເຂົາຈະບໍ່ຍອມໃຫ້ໃຜກິນຊີ້ນລູກຂອງຕົນຊຶ່ງກຳລັງກິນ
ຢູ່ ເພາະວ່າບໍ່ມີອັນໃດເຫລືອໃຫ້ພວກເຂົາອີກແລ້ວ ຍ້ອນພວກສັດຕູປິດລ້ອມທ່ານ ແລະຍ້ອນ
ຄວາມທຸກລຳບາກຊຶ່ງສັດຕູຂອງທ່ານມາມອບໃຫ້ທ່ານທັງຫລາຍທຸກປະຕູເມືອງ [56]ຜູ້ຍິງໃນໝູ່
ພວກທ່ານຊຶ່ງບໍ່ເຄີຍວາງຕີນລົງທີ່ພື້ນດິນເພາະວ່າເປັນຄົນສຳອາງແນວນັ້ນ ພວກນາງຈະຫວງ
ອາຫານຕໍ່ຜົວໃນອ້ອມເອິກຂອງນາງ ແລະຕໍ່ລູກຊາຍແລະລູກສາວຂອງນາງ [57]ເພາະໄດ້ເດັກ-
ນ້ອຍທີ່ຫາກໍອອກມາຈາກຫວ່າງຂາຂອງນາງ ແລະລູກແດງທີ່ຫາກໍເກີດ ນາງຈະກິນເປັນອາ-
ຫານງຽບໆ ເພາະວ່າຂັດສົນທຸກຢ່າງ ຍ້ອນການຖືກສັດຕູປິດລ້ອມ ແລະຍ້ອນຄວາມທຸກລຳ-
ບາກ ຊຶ່ງສັດຕູຂອງທ່ານມາມອບໃຫ້ທ່ານທັງຫລາຍທຸກປະຕູເມືອງ
[58]ຖ້າທ່ານທັງຫລາຍບໍ່ໃສ່ໃຈເຮັດຕາມຖ້ອຍຄຳທັງໝົດໃນພຣະບັນຍັດຊຶ່ງຂຽນໄວ້ໃນໜັງສື
ມ້ວນນີ້ ໂດຍບໍ່ຢຳເກງພຣະນາມທີ່ຊົງສະຫງ່າລາສີ ແລະທີ່ໜ້າຢ້ານເກງນີ້ ຄືພຣະນາມ **ພຣະຜູ້-
ເປັນເຈົ້າ ພຣະເຈົ້າ** ຂອງທ່ານ [59]ແລ້ວ **ພຣະຜູ້ເປັນເຈົ້າ** ຈະຊົງນຳມາສູ່ທ່ານ ແລະເຊື້ອສາຍຂອງ
ທ່ານຄືໄພພິບັດແບບຜິດທຳມະດາ ໄພພິບັດຮ້າຍແຮງ ແລະດົນນານ ແລະຄວາມເຈັບໄຂ້ຕ່າງໆ
ທີ່ຮ້າຍແຮງແລະດົນນານ [60]ຫລາຍກວ່ານັ້ນ ພຣະອົງຈະຊົງນຳພະຍາດທັງຫລາຍແຫ່ງເອຢິບ
ຊຶ່ງທ່ານຢ້ານນັ້ນມາສູ່ທ່ານ ແລະມັນຈະຕິດພັນຢູ່ກັບທ່ານ [61]ຄືກັນກັບພະຍາດ ແລະໄພພິບັດ
ທຸກຢ່າງ ຊຶ່ງບໍ່ໄດ້ລະບຸໄວ້ໃນໜັງສືພຣະບັນຍັດນີ້ **ພຣະຜູ້ເປັນເຈົ້າ** ຈະຊົງນຳມາຍັງທ່ານ ຈົນ

ກວ່າທ່ານທັງຫລາຍຈະຖືກທຳລາຍ 62ສິ່ງທີ່ພວກທ່ານທັງຫລາຍມີຫລາຍຢ່າງ ດວງດາວໃນ
ທ້ອງຟ້ານັ້ນ ທ່ານກໍຈະເຫລືອແຕ່ຈຳນວນໜ້ອຍດຽວ ເພາະວ່າທ່ານບໍ່ຟັງພຣະສຸລະສຽງຂອງ
ພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານ

## ຊົນຊາດທີ່ບໍ່ຟັງຄວາມພຣະເຈົ້າຈະຖືກສາບແຊ່ງ ແລະຖືກໄພພິບັດຕ່າງໆ

63ແລະຕໍ່ມາ ຖ້າພຣະຜູ້ເປັນເຈົ້າພໍພຣະໄທທີ່ຈະຊົງເຮັດດີຕໍ່ທ່ານ ແລະອຳນວຍພຣະພອນໃຫ້
ທ່ານເພີ່ມທະວີຫລາຍຂຶ້ນນັ້ນ ພຣະຜູ້ເປັນເຈົ້າກໍຈະຊົງພໍພຣະໄທທີ່ຈະເຮັດໃຫ້ທ່ານຈິບຫາຍ
ແລະທຳລາຍທ່ານເສຍຄືກັນ ທ່ານຈະຕ້ອງຖືກປະຖິ້ມໄປຈາກແຜ່ນດິນຊຶ່ງທ່ານກຳລັງຈະເຂົ້າໄປ
ຍຶດຄອງນັ້ນ 64ແລະພຣະຜູ້ເປັນເຈົ້າຈະຊົງເຮັດໃຫ້ທ່ານທັງຫລາຍກະຈັດກະຈາຍໄປທ່າມກາງ
ຊົນຊາດທັງຫລາຍ ຕັ້ງແຕ່ທີ່ສຸດປາຍແຜ່ນດິນໂລກຟາກນີ້ໄປເຖິງຟາກນັ້ນ ໃນທີ່ນັ້ນທ່ານຈະ
ບົວລະບັດພະອື່ນໆ ຊຶ່ງທ່ານ ແລະບັນພະບູລຸດຂອງທ່ານບໍ່ຮູ້ຈັກຄື ພະຊຶ່ງເຮັດດ້ວຍໄມ້ ແລະ
ຫີນ 65ເມື່ອທ່ານຢູ່ທ່າມກາງປະຊາຊາດຕ່າງໆນັ້ນ ທ່ານຈະບໍ່ພົບຄວາມສະບາຍເລີຍ ຝ່າຕີນ
ຂອງທ່ານຈະບໍ່ມີຍຸດພັກ ເພາະວ່າພຣະຜູ້ເປັນເຈົ້າຈະປະທານໃຫ້ທ່ານມີຈິດໃຈທີ່ຢ້ານກົວ ມີຕາ
ທີ່ມືດມົວລົງ ແລະມີຊີວິດທີ່ຄ່ອຍໆມອດລົງ 66ແລະຊີວິດຂອງທ່ານກໍຈະແຂວນຢູ່ເທິງຄວາມສົງ-
ໄສ ທ່ານຈະຕົກໃຈຢູ່ທັງກາງຄືນ ແລະກາງເວັນ ບໍ່ມີຄວາມແນ່ໃຈໃນຊີວິດຂອງທ່ານເລີຍ 67ໃນ
ຕອນເຊົ້າທ່ານຈະກ່າວວ່າ 'ຖ້າເປັນຕອນແລງກໍຈະດີ' ແລະໃນຕອນແລງທ່ານຈະກ່າວວ່າ 'ຖ້າ
ເປັນຕອນເຊົ້າກໍຈະດີ' ຍ້ອນຄວາມຕົກໃຈຊຶ່ງມີຢູ່ໃນຈິດໃຈທ່ານນັ້ນ ແລະຍ້ອນສິ່ງທີ່ຕາທ່ານຈະ
ເຫັນ 68ແລະພຣະຜູ້ເປັນເຈົ້າຈະນຳທ່ານກັບມາທາງເຮືອເຖິງເອຢິບ ເປັນການເດີນທາງຊຶ່ງຂ້າ-
ພະເຈົ້າໄດ້ກ່າວວ່າ ທ່ານຈະບໍ່ພົບເຫັນອີກເລີຍ ໃນບ່ອນນັ້ນທ່ານຈະຕ້ອງມອບຕົວຂາຍໃຫ້ສັດຕູ
ເປັນຂ້າທາດຊາຍ ແລະຂ້າທາດຍິງ ແຕ່ຈະບໍ່ມີຜູ້ໃດຊື້ທ່ານ"

# ບົດທີ 29

## ຄຳທຳນວາຍເຖິງການກະຈັດກະຈາຍໄປທົ່ວໂລກ

1ຕໍ່ໄປນີ້ເປັນຖ້ອຍຄຳໃນພັນທະສັນຍາຊຶ່ງພຣະຜູ້ເປັນເຈົ້າຊົງສັ່ງໂມເຊໃຫ້ປະຕິບັດກັບພວກ
ລູກຫລານອິສຣາເອນໃນແຜ່ນດິນໂມອາບ ນອກຈາກພັນທະສັນຍາຊຶ່ງພຣະອົງຊົງເຮັດກັບ
ພວກເຂົາທີ່ໂຮເຣັບ

2ໂມເຊເອີ້ນບັນດາພວກລູກຫລານອິສຣາເອນມາ ແລະກ່າວແກ່ພວກເຂົາວ່າ "ທ່ານທັງ-
ຫລາຍໄດ້ເຫັນທຸກສິ່ງຊຶ່ງພຣະຜູ້ເປັນເຈົ້າຊົງເຮັດຕໍ່ໜ້າຕໍ່ຕາຂອງທ່ານໃນແຜ່ນດິນເອຢິບ ຕໍ່
ຟາຣາໂອແລະຕໍ່ບັນດາຂ້າລາຊະການຂອງເພິ່ນ ແລະຕໍ່ປະເທດຂອງເພິ່ນທັງໝົດ 3ທັງການທົດ
ລອງໃຫຍ່ຊຶ່ງໃນຕາຂອງທ່ານໄດ້ເຫັນ ທັງໝາຍສຳຄັນ ແລະການອັດສະຈັນຍິ່ງໃຫຍ່ເຫລົ່ານັ້ນ
4ແຕ່ຈົນເຖິງທຸກມື້ນີ້ ພຣະຜູ້ເປັນເຈົ້າຍັງບໍ່ໄດ້ປະທານຈິດໃຈທີ່ເຂົ້າໃຈ ຕາທີ່ເບິ່ງເຫັນໄດ້ ແລະຫູ
ທີ່ຍິນໄດ້ໃຫ້ແກ່ທ່ານ 5'ເຮົາໄດ້ນຳເຈົ້າຢູ່ໃນຖິ່ນແຫ້ງແລ້ງກັນດານສີ່ສິບປີ ເສື້ອຜ້າຂອງເຈົ້າບໍ່ໄດ້
ຂາດໄປຈາກເຈົ້າ ແລະເກີບບໍ່ໄດ້ຂາດຫລຸດໄປຈາກຕີນຂອງເຈົ້າ 6ເຈົ້າທັງຫລາຍບໍ່ໄດ້ກິນເຂົ້າຈີ່

ເຈົ້າບໍ່ໄດ້ດື່ມນໍ້າອະງຸ່ນ ຫລືເຫລົ້າ ເພື່ອເຈົ້າຈະໄດ້ຮູ້ວ່າ ເຮົາເປັນພຣະຜູ້ເປັນເຈົ້າພຣະເຈົ້າຂອງ
ເຈົ້າ' 7ແລະເມື່ອທ່ານມາເຖິງທີ່ນີ້ ສີໂຮນກະສັດເມືອງເຮັດຊະໂບນ ແລະໂອກກະສັດເມືອງ
ບາຊານ ອອກມາເຮັດສົງຄາມກັບພວກເຮົາ ແຕ່ເຮົາທັງຫລາຍກໍໄດ້ເຮັດໃຫ້ພວກເຂົາພ່າຍແພ້
ໄປ 8ເຮົາຍຶດແຜ່ນດິນຂອງພວກເຂົາ ແລະມອບໃຫ້ເປັນມໍລະດົກແກ່ຄົນຣູເບັນ ຄົນຄາດ ແລະ
ຄົນມານາເຊເຄິ່ງເຜົ່າ

9ສະນັ້ນ ຈົ່ງໃສ່ໃຈເຮັດຕາມຖ້ອຍຄຳແຫ່ງພັນທະສັນຍານີ້ ເພື່ອທ່ານທັງຫລາຍຈະຈະເລີນໃນ
ບັນດາກິດຈະການຊຶ່ງທ່ານເຮັດ 10ໃນມື້ນີ້ ທ່ານທັງຫລາຍທຸກຄົນຢືນຢູ່ຕໍ່ພຣະພັກພຣະຜູ້ເປັນ-
ເຈົ້າພຣະເຈົ້າຂອງທ່ານ ຄືບັນດາຫົວໜ້າຕະກູນທັງຫລາຍ ພວກຜູ້ໃຫຍ່ຂອງທ່ານ ແລະເຈົ້າ
ໜ້າທີ່ຂອງທ່ານ ບັນດາຜູ້ຊາຍຂອງອິສຣາເອນ 11ລູກຂອງທ່ານ ເມຍຂອງທ່ານ ແລະຄົນຕ່າງ
ດ້າວທີ່ຢູ່ໃນຄ້າຍຂອງທ່ານ ທັງຄົນທີ່ຕັດຟືນໃຫ້ທ່ານ ແລະຄົນທີ່ຕັກນໍ້າໃຫ້ທ່ານ 12ເພື່ອທ່ານຈະ
ໄດ້ເຂົ້າມາໃນພັນທະສັນຍາແຫ່ງພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານຄືໃນພັນທະສັນຍາທີ່ປະຕິ-
ຍານໄວ້ ຊຶ່ງພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານຊົງເຮັດກັບທ່ານໃນມື້ນີ້ 13ເພື່ອພຣະອົງຈະຊົງ
ແຕ່ງຕັ້ງທ່ານທັງຫລາຍໃນມື້ນີ້ໃຫ້ເປັນປະຊາຊົນຂອງພຣະອົງ ແລະເພື່ອພຣະອົງຈະເປັນພຣະ-
ເຈົ້າຂອງທ່ານ ດັ່ງທີ່ພຣະອົງຊົງກ່າວກັບທ່ານນັ້ນ ແລະດັ່ງທີ່ພຣະອົງຊົງປະຕິຍານກັບບັນພະບູ-
ລຸດຂອງທ່ານ ຄືກັບອັບຣາຮາມ ອີຊາກ ແລະຢາໂຄບ 14ຂ້າພະເຈົ້າບໍ່ໄດ້ເຮັດພັນທະສັນຍາກັບ
ຄຳປະຕິຍານນີ້ກັບທ່ານເທົ່ານັ້ນ 15ແຕ່ກັບຜູ້ທີ່ຢືນຢູ່ກັບເຮົາທັງຫລາຍໃນມື້ນີ້ ຕໍ່ພຣະພັກພຣະຜູ້-
ເປັນເຈົ້າພຣະເຈົ້າຂອງເຮົາ ແລະກັບຜູ້ທີ່ບໍ່ໄດ້ຢູ່ບ່ອນນີ້ກັບເຮົາໃນມື້ນີ້

16(ທ່ານຮູ້ຢູ່ແລ້ວວ່າ ເຮົາອາໄສຢູ່ໃນແຜ່ນດິນເອຢິບຢ່າງໃດ ແລະເຮົາທັງຫລາຍໄດ້ຜ່ານ
ທ່າມກາງປະຊາຊາດ ຊຶ່ງທ່ານທັງຫລາຍຜ່ານພົ້ນຢ່າງໃດ 17ທ່ານທັງຫລາຍໄດ້ເຫັນສິ່ງທີ່ໜ້າຂີ້-
ດຽດຂອງພວກເຂົາແລ້ວ ຄືເຫັນຮູບເຄົາລົບທີ່ເຮັດດ້ວຍໄມ້ ດ້ວຍຫີນ ແລະດ້ວຍເງິນ ແລະຄຳ
ຊຶ່ງຢູ່ທ່າມກາງພວກເຂົາທັງຫລາຍ) 18ຈົ່ງລະວັງໃຫ້ດີ ຢ້ານວ່າຈະມີຊາຍ ຫລືຍິງຄົນໃດ ຫລື
ຄອບຄົວໃດ ຫລືຕະກູນໃດຊຶ່ງໃນມື້ນີ້ຈິດໃຈຂອງພວກເຂົາຫັນໄປຈາກພຣະຜູ້ເປັນເຈົ້າພຣະເຈົ້າ
ຂອງພວກເຮົາໄປບົວລະບັດພະຂອງປະຊາຊາດເຫລົ່ານັ້ນ ຢ້ານວ່າທ່າມກາງທ່ານຈະມີຮາກຊຶ່ງ
ເກີດເປັນບີໝີ ແລະເຄືອຄໍຣໍ 19ແລະຕໍ່ມາ ເມື່ອຄົນນັ້ນໄດ້ຍິນຖ້ອຍຄຳແຫ່ງຄຳສາບແຊ່ງນີ້ ຈະ
ນຶກອວຍພອນຕົວເອງໃນໃຈວ່າ 'ແມ່ນຂ້ອຍຈະຍ່າງດ້ວຍຄວາມດື້ດ້ານຕາມໃຈຂອງຂ້ອຍກໍຕາມ
ຂ້ອຍກໍຈະເປັນສຸກ' ຄວາມຄິດເຊັ່ນນີ້ກໍຈະນຳການທຳລາຍມາເຖິງພືດຜົນ ບໍ່ວ່າໃນບ່ອນຊຸ່ມນໍ້າ
ຫລືບ່ອນແຫ້ງແລ້ງ' 20ພຣະຜູ້ເປັນເຈົ້າຈະບໍ່ໄດ້ຊົງໃຫ້ອະໄພແກ່ຄົນນັ້ນ ແຕ່ພຣະພິໂລດຂອງ
ພຣະຜູ້ເປັນເຈົ້າ ແລະຄວາມຫວງແຫນຂອງພຣະອົງຈະພຸ່ງຂຶ້ນຕໍ່ຊາຍຄົນນັ້ນ ແລະຄຳສາບ
ແຊ່ງທັງໝົດຊຶ່ງຂຽນໄວ້ໃນໜັງສືມ້ວນນີ້ຈະຕົກຢູ່ເທິງລາວແລະພຣະຜູ້ເປັນເຈົ້າຈະຊົງລຶບຊື່ຂອງ
ລາວອອກຈາກທ້ອງຟ້າ 21ແລ້ວພຣະຜູ້ເປັນເຈົ້າຈະຊົງແຍກລາວອອກຈາກຕະກູນຄົນອິສຣາ-
ເອນທັງປວງ ໃຫ້ປະສົບຄວາມລຳບາກຕາມຄຳສາບແຊ່ງທັງໝົດຂອງພັນທະສັນຍາ ຊຶ່ງຈາລຶກ
ໄວ້ໃນໜັງສືພຣະບັນຍັດນີ້ 22ແລະຄົນຊົ່ວລຸ້ນຕໍ່ມາຄືລູກຫລານຊຶ່ງເກີດມາພາຍຫລັງທ່ານ ແລະ
ຊົນຕ່າງດ້າວຊຶ່ງມາຈາກແຜ່ນດິນທີ່ຢູ່ຫ່າງໄກ ຈະກ່າວເມື່ອພວກເຂົາເຫັນໄພພິບັດຕ່າງໆຂອງ

ແຜ່ນດິນນັ້ນ ແລະໂຣກໄພຊຶ່ງພຣະຜູ້ເປັນເຈົ້າຊົງບັນດານໃຫ້ເປັນ 23ຄືແຜ່ນດິນທັງໝົດເປັນກຳ
ມະຖັນ ແລະເປັນເກືອ ແລະຖືກເຜົາໄຟ ບໍ່ມີໃຜປູກ ຫລືຫວ່ານ ແລະບໍ່ມີອັນໃດງອກຂຶ້ນ ເປັນ
ບ່ອນທີ່ຫຍ້າບໍ່ງອກ ເປັນການຖືກທຳລາຍແບບໂຊໂດມ ແລະໂກໂມຣາ ເມືອງອັດມາ ເມືອງ
ເຊໂບຢີມຊຶ່ງພຣະຜູ້ເປັນເຈົ້າຊົງທຳລາຍດ້ວຍຄວາມໂກດຮ້າຍ ແລະພຣະພິໂລດ 24ປະຊາຊາດ
ທັງຫລາຍຈະກ່າວວ່າ 'ເປັນຫຍັງພຣະຜູ້ເປັນເຈົ້າຊົງເຮັດເຊັ່ນນີ້ແກ່ແຜ່ນດິນນີ້ ພຣະພິໂລດ
ຫລວງຫລາຍເຊັ່ນນີ້ໝາຍຄວາມວ່າຢ່າງໃດ' 25ແລ້ວຄົນຈະເວົ້າກັນວ່າ 'ເພາະວ່າພວກເຂົາປະ
ຖິ້ມພັນທະສັນຍາຂອງພຣະຜູ້ເປັນເຈົ້າພຣະເຈົ້າຂອງບັນພະບູລຸດຂອງພວກເຂົາ ຊຶ່ງພຣະອົງຊົງ
ເຮັດໄວ້ກັບພວກເຂົາເມື່ອພຣະອົງຊົງພາພວກເຂົາອອກຈາກແຜ່ນດິນເອຢິບ 26ໄປບົວລະບັດນະ-
ມັດສະການພະອື່ນ ເປັນພະຊຶ່ງພວກເຂົາບໍ່ເຄີຍຮູ້ຈັກ ແລະຊຶ່ງພຣະອົງບໍ່ໄດ້ປະທານແກ່ພວກ
ເຂົາ 27ສະນັ້ນ ພຣະພິໂລດຂອງພຣະຜູ້ເປັນເຈົ້າຈຶ່ງລຸກຂຶ້ນຕໍ່ແຜ່ນດິນນີ້ ນຳເອົາບັນດາຄຳສາບ
ແຊ່ງຊຶ່ງຈາລຶກໄວ້ໃນໜັງສືນີ້ມາເຖິງ 28ແລະພຣະຜູ້ເປັນເຈົ້າຈຶ່ງຊົງຖອນຮາກພວກເຂົາເສຍຈາກ
ແຜ່ນດິນດ້ວຍຄວາມຮ້າຍ ພຣະພິໂລດອັນຫລວງຫລາຍ ແລະຖິ້ມພວກເຂົາໄປໃນອີກແຜ່ນດິນ
ໜຶ່ງ ດັ່ງທີ່ເປັນຢູ່ທຸກມື້ນີ້' 29ສິ່ງເລິກລັບທັງປວງເປັນຂອງພຣະຜູ້ເປັນເຈົ້າພຣະເຈົ້າຂອງເຮົາ
ທັງຫລາຍ ແຕ່ສິ່ງຊົງສະແດງນັ້ນເປັນຂອງເຮົາທັງຫລາຍ ແລະ ຂອງລູກຫລານຂອງເຮົາຕະ-
ຫລອດໄປເປັນນິດ ເພື່ອເຮົາຈະເຮັດຕາມຖ້ອຍຄຳທັງໝົດໃນພຣະບັນຍັດນີ້"

# ບົດທີ 30

## ຄຳເຕືອນໃຈເລື່ອງພັນທະສັນຍາກ່ຽວກັບການາອານ

1ບັດນີ້ ຂ້າພະເຈົ້າຂໍໃຫ້ທ່ານເລືອກເອົາລະຫວ່າງພຣະພອນກັບຄຳສາບແຊ່ງ ເມື່ອເຫດການ
ເຫລົ່ານີ້ເກີດຂຶ້ນກັບທ່ານແລ້ວ ແລະເມື່ອຢູ່ໃນທ່າມກາງຊົນຊາດທີ່ພຣະຜູ້ເປັນເຈົ້າຊົງຂັບໄລ່
ທ່ານໄປນັ້ນ ທ່ານຈະລະນຶກໄດ້ເຖິງສິ່ງທີ່ຂ້າພະເຈົ້າເວົ້າ. 2ແລ້ວທ່ານກັບເຊື້ອສາຍຂອງທ່ານຈະ
ກັບຄືນມາຫາພຣະຜູ້ເປັນເຈົ້າ ແລະຈະເຮັດຕາມຂໍ້ຄຳສັ່ງຂອງພຣະອົງ ຊຶ່ງຂ້າພະເຈົ້າໄດ້ບອກ
ໃນມື້ນີ້ຢ່າງສຸດອົກສຸດໃຈ. 3ເມື່ອນັ້ນ ພຣະຜູ້ເປັນເຈົ້າຈະຊົງເມດຕາທ່ານ ຈະນຳທ່ານກັບຄືນມາ
ຈາກຊົນຊາດທີ່ຊົງຂັບໄລ່ໄປ ທັງຈະເຮັດໃຫ້ທ່ານກັບມາທ້ອນໂຮມກັນຄືເກົ່າອີກ. 4-5ເຖິງແມ່ນ
ວ່າທ່ານຈະຕົກໄປຢູ່ໄກຄົນລະຟາກຟ້າ ພຣະຜູ້ເປັນເຈົ້າກໍຈະຊົງຮວບຮວມເອົາພວກທ່ານກັບມາ
ຄອບຄອງແຜ່ນດິນທີ່ບັນພະບູລຸດເຄີຍຢູ່ມາກ່ອນ ພ້ອມທັງຈະຊົງເຮັດໃຫ້ແຜ່ນດິນນັ້ນອຸດົມສົມ-
ບູນ ແລະມີຄົນຈຳນວນຫລາຍກວ່າທີ່ເຄີຍມີມາແລ້ວໃນສະໄໝບັນພະບູລຸດຂອງທ່ານ. 6ຈະຊົງ
ເຮັດໃຫ້ທ່ານກັບເຊື້ອສາຍມີໃຈເຊື່ອຟັງ ເພື່ອຈະໄດ້ຮັກພຣະອົງຢ່າງສຸດຈິດສຸດໃຈ ແລະມີຊີວິດຢູ່
ໃນແຜ່ນດິນນັ້ນສືບຕໍ່ໄປ. 7-9ຈະຊົງສາບແຊ່ງພວກສັດຕູຜູ້ກຽດຊັງ ແລະຂົ່ມເຫັງທ່ານ ແລ້ວ
ທ່ານຈະເຊື່ອຟັງ ແລະເຮັດຕາມຂໍ້ຄຳສັ່ງທີ່ພຣະອົງຊົງບອກຂ້າພະເຈົ້າມື້ນີ້ອີກ ພຣະຜູ້ເປັນເຈົ້າ
ຈະຊົງໃຫ້ການງານຂອງທ່ານຈະເລີນຮຸ່ງເຮືອງ ໃຫ້ມີລູກຫລານແລະງົວຄວາຍຫລາຍ ພ້ອມທັງມີ
ເຂົ້າປານານ້ຳອຸດົມສົມບູນ ຈະຊົງພໍພຣະໄທເຮັດໃຫ້ອຸດົມສົມບູນ ແລະຮັ່ງມີຄືກັບທີ່ພຣະອົງຊົງ
ເຮັດໃຫ້ພວກບັນພະບູລຸດ. 10ແຕ່ທ່ານຈະຕ້ອງເຊື່ອຟັງ ແລະເຮັດຕາມກົດບັນຍັດ ແລະພຣະທຳ

ຊຶ່ງໄດ້ບົ່ງໄວ້ໃນໜັງສືຄຳສອນນີ້ ພ້ອມກັບໃຫ້ເຊື່ອຟັງພຣະອົງຢ່າງສຸດຈິດສຸດໃຈ.
11ພຣະບັນຍັດທີ່ຂ້າພະເຈົ້າຈະບອກທ່ານໃນມື້ນີ້ ບໍ່ແມ່ນວ່າເປັນຂອງຍາກ ຫລືເຫລືອວິໄສທີ່
ທ່ານຈະເຂົ້າໃຈໄດ້. 12-13ມັນບໍ່ໄດ້ຢູ່ເທິງຟ້າ ຫລືຟາກທະເລ ສະນັ້ນ ທ່ານບໍ່ຕ້ອງຖາມດອກວ່າ
ໃຜຈະຂຶ້ນເທິງຟ້າ ຫລືຂ້າມທະເລໄປເອົາມາໄດ້ ເພື່ອເຮົາຈະໄດ້ຟັງ ແລະປະພຶດຕາມ. 14ບໍ່ແມ່ນ
ຢ່າງນັ້ນ ມັນຢູ່ກັບທ່ານນີ້ເອງ ຊຶ່ງທ່ານສາມາດເຂົ້າໃຈ ແລະຍົກມາເປັນຂໍ້ອ້າງອີງໄດ້ ສະນັ້ນ
ຈົ່ງປະພຶດຕາມເທີ້ນ.
15ມື້ນີ້ ຂ້າພະເຈົ້າໄດ້ເອົາຄວາມຮັ່ງມີ ແລະຊີວິດ ຫລືການທຳລາຍ ແລະຄວາມຕາຍມາໃຫ້
ທ່ານເລືອກ. 16ຖ້າວ່າທ່ານເຮັດຕາມພຣະບັນຍັດຂອງພຣະຜູ້ເປັນເຈົ້າທີ່ຂ້າພະເຈົ້າໃຫ້ໃນມື້ນີ້ ຄື
ວ່າ ຮັກ ແລະເຊື່ອຟັງພຣະອົງພ້ອມທັງປະຕິບັດຕາມກົດບັນຍັດ ແລະຮີດຄອງປະເພນີທັງໝົດ
ທ່ານກໍຈະຈະເລີນຮຸ່ງເຮືອງ ແລະກາຍເປັນຊົນຊາດໃຫຍ່ ພຣະຜູ້ເປັນເຈົ້າຈະຊົງອວຍພອນທ່ານ
ໃນແຜ່ນດິນທີ່ຈະເຂົ້າຍຶດຄອງ. 17ແຕ່ຖ້າມີໃຈດື້ ບໍ່ຍອມຮັບຟັງ ແລະຖືກພວກເຂົາລໍ້ລວງໃຫ້
ຂາບໄຫວ້ພະອື່ນ. 18ຂ້າພະເຈົ້າຂໍເຕືອນໃນທີ່ນີ້ ແລະດຽວນີ້ວ່າ ພວກທ່ານຈະຖືກທຳລາຍ ຈະມີ
ຊີວິດບໍ່ຍືນຍາວຢູ່ໃນແຜ່ນດິນທີ່ກຳລັງຈະຂ້າມແມ່ນ້ຳຢໍແດນໄປຍຶດຄອງນັ້ນ. 19ບັດນີ້ ຂ້າພະ-
ເຈົ້າຂໍໃຫ້ທ່ານເລືອກເອົາລະຫວ່າງຊີວິດກັບຄວາມຕາຍ ລະຫວ່າງພຣະພອນກັບຄຳສາບແຊ່ງ
ຂອງພຣະເຈົ້າ ຂໍໃນສະຫວັນ ແລະໂລກ ຈົ່ງເປັນພະຍານຕໍ່ການເລືອກນີ້. 20ສະນັ້ນ ຂໍໃຫ້ທ່ານ
ເລືອກເອົາຊີວິດເທີ້ນ ຈົ່ງຮັກພຣະຜູ້ເປັນເຈົ້າ ເຊື່ອຟັງ ແລະຕິດພັນຢູ່ກັບພຣະອົງ ເພື່ອວ່າທ່ານ
ກັບເຊື້ອສາຍຂອງທ່ານຈະມີອາຍຸໝັ້ນຍືນຢູ່ໃນແຜ່ນດິນທີ່ພຣະອົງຊົງສັນຍາວ່າຈະຍົກໃຫ້ບັນພະ-
ບູລຸດຂອງທ່ານ ຄືອັບຣາຮາມ ອີຊາກ ແລະຢາໂຄບນັ້ນ.

# ບົດທີ 31

## ເງື່ອນໄຂໃນການສ້າງຂຶ້ນໃໝ່ ແລະຮັບພຣະພອນ

1ໂມເຊໄດ້ເວົ້າກັບຊາວອິສຣາເອນຕໍ່ໄປວ່າ, 2“ດຽວນີ້ອາຍຸຂ້າພະເຈົ້າໄດ້ຮ້ອຍຊາວປີແລ້ວ
ເຫັນວ່າຈະເປັນຜູ້ນຳຂອງພວກທ່ານຕໍ່ໄປອີກບໍ່ໄດ້ ນອກຈາກນີ້ ພຣະຜູ້ເປັນເຈົ້າຍັງຊົງບອກວ່າ
ຂ້າພະເຈົ້າຈະບໍ່ໄດ້ຂ້າມແມ່ນ້ຳຢໍແດນໄປ. 3ພຣະອົງເອງຈະເປັນຜູ້ນຳໜ້າທ່ານໄປ ໂດຍຈະຊົງ
ທຳລາຍຊົນຊາດຊຶ່ງຢູ່ທີ່ນັ້ນ ເພື່ອທ່ານຈະໄດ້ເປັນເຈົ້າຂອງແຜ່ນດິນຂອງພວກເຂົາ ແລະໂຢ-
ຊວຍຈະເປັນຜູ້ນຳຂອງພວກທ່ານ ຕາມທີ່ພຣະຜູ້ເປັນເຈົ້າຊົງກ່າວ. 4ພຣະອົງຈະຊົງທຳລາຍ
ປະຊາຊົນເຫລົ່ານີ້ ເໝືອນດັ່ງຊົງທຳລາຍກະສັດສີໂຮນແລະກະສັດໂອກ ຂອງຊາວອະໂມຣິດ
ກັບປະເທດຂອງເພິ່ນນັ້ນ ພຣະຜູ້ເປັນເຈົ້າຊົງໃຫ້ທ່ານມີໄຊຊະນະ. 5ແລະພວກທ່ານຈົ່ງເຮັດກັບ
ພວກເຂົາໄດ້ທຸກຢ່າງຕາມທີ່ຂ້າພະເຈົ້າບອກ. 6ຈົ່ງເຂັ້ມແຂງ ແລະກ້າຫານເທີ້ນ ຢ່າສູ້ຢ້ານພວກ
ເຂົາ ເພາະວ່າພຣະຜູ້ເປັນເຈົ້າເອງຈະຊົງຢູ່ນຳທ່ານ ພຣະອົງຈະບໍ່ຊົງປ່ອຍໃຫ້ໝົດຫວັງ ຫລືປະ
ຖິ້ມທ່ານດອກ.” 7ແລ້ວໂມເຊໄດ້ເອີ້ນໂຢຊວຍເຂົ້າມາຫາ ແລະເວົ້າກັບເພິ່ນຕໍ່ໜ້າຊາວອິສຣາ-
ເອນວ່າ, “ຈົ່ງເຂັ້ມແຂງແລະກ້າຫານເທີ້ນ ເພາະທ່ານເປັນຄົນໜຶ່ງຊຶ່ງຈະນຳພາປະຊາຊົນເຫລົ່າ
ນີ້ ໄປຍຶດຄອງແຜ່ນດິນທີ່ພຣະຜູ້ເປັນເຈົ້າຊົງສັນຍາວ່າຈະຍົກໃຫ້ບັນພະບູລຸດຂອງພວກເຂົາ

ແລະແມ່ນທ່ານຊິ່ງເປັນຜູ້ທີ່ຈະໃຫ້ແຜ່ນດິນນີ້ແກ່ພວກເຂົາເປັນກຳມະສິດ. 8ພຣະຜູ້ເປັນເຈົ້າຈະຢູ່
ນຳທ່ານ ແລະນຳໜ້າທ່ານໄປ ຈະບໍ່ປ່ອຍໃຫ້ໝົດຫວັງ ຫລືປະຖິ້ມທ່ານເລີຍ ສະນັ້ນ ຈົ່ງກ້າ-
ຫານ ແລະຢ່າສູ້ຢ້ານ.”

## ໂຢຊວຍຮັບໜ້າທີ່ສືບແທນໂມເຊ

9ຕໍ່ມາ ໂມເຊໄດ້ຂຽນພຣະທຳຂອງພຣະເຈົ້າ ແລ້ວມອບໃຫ້ພວກຜູ້ນຳຂອງຊາວອິສຣາເອນ
ກັບປະໂລຫິດຊາວເລວີ ຜູ້ຫາມຫີບຄຳສັນຍາຂອງພຣະເຈົ້າ. 10-11ພ້ອມກັບສັ່ງພວກເຂົາວ່າ,
“ເມື່ອພວກເຈົ້າມາຂາບໄຫວ້ພຣະຜູ້ເປັນເຈົ້າຂອງທ່ານໃນບ່ອນທີ່ຊົງເລືອກໄວ້ແລ້ວ ໃນໂອກາດ
ວັນສະຫລອງຢູ່ຕູບທຸກໆ ເຈັດປີ ຕ້ອງອ່ານພຣະທຳຂອງພຣະເຈົ້າໃຫ້ຊາວອິສຣາເອນຟັງ
ເພາະວ່າປີທີເຈັດນັ້ນເປັນປີຍົກເລີກໜີ້. 12ຈົ່ງເອີ້ນຄົນທັງປວງມາປະຊຸມກັນ ທັງຜູ້ຍິງເດັກນ້ອຍ
ແລະຊາວຕ່າງດ້າວໃນເມືອງຂອງທ່ານ ເພື່ອວ່າທຸກຄົນຈະໄດ້ຍິນພຣະທຳນັ້ນ ແລ້ວຈະໄດ້ຢຳ
ເກງພຣະຜູ້ເປັນເຈົ້າ ແລະເອົາໃຈໃສ່ເຮັດຕາມຄຳສອນຂອງພຣະອົງ. 13ແລະເພື່ອລູກຫລານ
ຂອງທ່ານຜູ້ຍັງບໍ່ທັນໄດ້ຍິນພຣະທຳນີ້ ແລ້ວພວກເຂົາກໍຈະຮູ້ຈັກຢຳເກງພຣະຜູ້ເປັນເຈົ້າ ຕາບ
ເທົ່າເວລາທີ່ຢູ່ໃນແຜ່ນດິນທີ່ພວກທ່ານຈະຂ້າມແມ່ນ້ຳຢໍແດນໄປຍຶດຄອງນັ້ນ.”

## ອ່ານພຣະທຳຂອງພຣະເຈົ້າທຸກໆ ເຈັດປີ

14ຕໍ່ມາ ພຣະຜູ້ເປັນເຈົ້າຊົງກ່າວຕໍ່ໂມເຊວ່າ, “ເຈົ້າໃກ້ຈະໝົດອາຍຸແລ້ວ ຈົ່ງເອີ້ນໂຢຊວຍໄປ
ຍັງເຕັນນັດພົບ ເພື່ອເຮົາຈະໄດ້ບອກສອນລາວ.” 15ໂມເຊກັບໂຢຊວຍກໍໄປຍັງເຕັນນັ້ນ ແລ້ວ
ພຣະຜູ້ເປັນເຈົ້າຊົງປະກົດໃຫ້ພວກເຂົາເຫັນໃນກ້ອນເມກໃກ້ໆ ປະຕູຕູບນັ້ນ.” 16ພຣະຜູ້ເປັນ-
ເຈົ້າຊົງບອກໂມເຊວ່າ, “ເຈົ້າຈະຕາຍໃນບໍ່ຊ້ານີ້ ເມື່ອເຈົ້າຕາຍແລ້ວ ປະຊາຊົນຈະເຮັດບໍ່ສັດຊື່ຕໍ່
ເຮົາ ພວກເຂົາຈະລະເມີດຄຳໝັ້ນສັນຍາທີ່ເຮົາໄດ້ໃຫ້ ແລະຈະປະຖິ້ມເຮົາໄປຂາບໄຫວ້ພະໃນ
ປະເທດທີ່ພວກເຂົາເຂົ້າໄປ. 17ເມື່ອມັນເກີດຂຶ້ນດັ່ງນັ້ນ ເຮົາຈະຍ້າຍ ຈະປະຖິ້ມ ແລະທຳລາຍ
ພວກເຂົາ ໄພວິບັດໜ້າຢ້ານຫລາຍຢ່າງຈະມາຖືກພວກເຂົາ ແລ້ວພວກເຂົາຈະສຳນຶກໃນໃຈວ່າ
ສິ່ງເຫລົ່ານີ້ໄດ້ເກີດຂຶ້ນຍ້ອນວ່າເຮົາບໍ່ໄດ້ຢູ່ນຳພວກເຂົາຕໍ່ໄປ. 18ເຮົາຈະບໍ່ຊ່ອຍເຫລືອພວກເຂົາ
ເພາະວ່າພວກເຂົາໄດ້ເຮັດຊົ່ວ ແລະຂາບໄຫວ້ພະອື່ນ. 19ດ້ວຍເຫດນີ້ ເຈົ້າຈົ່ງຂຽນບົດເພງຕໍ່ໄປນີ້
ແລ້ວສອນໃຫ້ພວກອິສຣາເອນຮ້ອງສຽດສີພວກເຂົາເອງ. 20ເຮົາຈະພາພວກເຂົາເຂົ້າໄປຍັງ
ແຜ່ນດິນອັນອຸດົມສົມບູນແລະຮັ່ງມີ ຕາມທີ່ເຮົາໄດ້ສັນຍາໄວ້ກັບບັນພະບູລຸດຂອງພວກເຂົາ ຢູ່ທີ່
ນັ້ນຈະມີອາຫານທຸກຢ່າງກິນ ແລະຈະມີຊີວິດຢູ່ດ້ວຍຄວາມຜາສຸກ ແຕ່ພວກເຂົາຈະປ່ຽນໃຈໄປ
ຂາບໄຫວ້ພະອື່ນ ຈະປະຖິ້ມເຮົາ ແລະລະເມີດຄຳໝັ້ນສັນຍາ. 21ໄພວິບັດອັນໜ້າຢ້ານຫລາຍ
ຢ່າງຈະຕົກຖືກພວກເຂົາ ແລ້ວລູກຫລານຂອງພວກເຂົາຈະຮ້ອງເພງສຽດສີພວກເຂົາເອງ ເພາະ
ກ່ອນເຮົາຈະນຳພວກເຂົາເຂົ້າໄປຍັງແຜ່ນດິນທີ່ເຮົາສັນຍາວ່າຈະໃຫ້ນັ້ນ ເຮົາໄດ້ຮູ້ຄວາມຄິດໃນ
ໃຈຂອງພວກເຂົາແລ້ວ.” 22ໂມເຊໄດ້ຂຽນບົດເພງນີ້ ແລະນຳເອົາມາສອນປະຊາຊົນອິສຣາເອນ
ໃນມື້ນັ້ນເລີຍ. 23ຕໍ່ມາ ພຣະຜູ້ເປັນເຈົ້າຊົງບອກໃຫ້ໂຢຊວຍລູກຊາຍຂອງນູນວ່າ, “ຈົ່ງເຂັ້ມ-
ແຂງ ແລະກ້າຫານເທີ້ນ ເພາະວ່າເຈົ້າຈະນຳຊາວອິສຣາເອນເຂົ້າໄປໃນແຜ່ນດິນທີ່ເຮົາສັນຍາ
ວ່າຈະໃຫ້ແກ່ພວກເຂົາ ແລະເຮົາຈະຢູ່ກັບເຈົ້າ.”

24ໂມເຊ ໄດ້ຂຽນພຣະທຳຂອງ ພຣະເຈົ້າ ລົງ ໃນປຶ້ມ ໄດ້ຂຽນລົງທັງໝົດບໍ່ໄດ້ເວັ້ນຈັກຄຳ.
25ເມື່ອຂຽນສຸດແລ້ວ ລາວໄດ້ເວົ້າກັບຊາວ ເລວີ ທີ່ຫາມຫີບຄຳສັນຍາຂອງ ພຣະຜູ້ເປັນເຈົ້າ ວ່າ,
26“ຈົ່ງເອົາໜັງສືພຣະທຳນີ້ໃສ່ໄວ້ໃນຫີບຄຳສັນຍາຂອງ ພຣະຜູ້ເປັນເຈົ້າ ເພື່ອໄວ້ເປັນພະຍານຕໍ່ສູ້
ໄພ່ພົນຂອງ ພຣະເຈົ້າ ຢູ່ທີ່ນັ້ນ. 27ຂ້າພະເຈົ້າຮູ້ດີວ່າພວກເຂົາເປັນຄົນຫົວດື້ ແລະທໍລະຍົດ ໃນ
ລະຫວ່າງຂ້າພະເຈົ້າມີຊີວິດຢູ່ນັ້ນ ພວກເຂົາໄດ້ເປັນກະບົດຕໍ່ສູ້ ພຣະຜູ້ເປັນເຈົ້າ ຫລາຍເທື່ອ ສະ-
ນັ້ນ ເມື່ອຂ້າພະເຈົ້າຕາຍແລ້ວ ເຂົາແຮງຈະເປັນກະບົດຫລາຍຂຶ້ນອີກ. 28ຈົ່ງເອີ້ນບັນດາຜູ້ນຳ
ຕະກູນ ແລະເຈົ້ານາຍທຸກໆ ຄົນມາປະຊຸມຊ້ອງໜ້າຂ້າພະເຈົ້າເສຍ ເພື່ອຂ້າພະເຈົ້າຈະໄດ້ບອກ
ສິ່ງນີ້ແກ່ພວກເຂົາ ຂ້າພະເຈົ້າຈະຂໍໃຫ້ສະຫວັນ ແລະ ໂລກ ເປັນພະຍານ ໃນການຕໍ່ສູ້ພວກເຂົາ.
29ອີກຢ່າງໜຶ່ງ ຂ້າພະເຈົ້າຮູ້ດີວ່າ ເມື່ອຂ້າພະເຈົ້າຕາຍແລ້ວ ພວກທ່ານຈະເຮັດຊົ່ວ ແລະລະ-
ເລີຍສິ່ງທີ່ຂ້າພະເຈົ້າສອນໄວ້ ດັ່ງນັ້ນ ໄພວິບັດຈະຕົກຖືກທ່ານໃນພາຍຂ້າງໜ້າ ເພາະວ່າພວກ
ທ່ານໄດ້ລະເມີດຕໍ່ຄຳສັ່ງຂອງ ພຣະຜູ້ເປັນເຈົ້າ.”

## ພຣະຄຳສັ່ງເທື່ອສຸດທ້າຍທີ່ພຣະອົງປະທານແກ່ໂມເຊ

30ແລ້ວ ໂມເຊ ໄດ້ຮ້ອງເພງຕໍ່ໄປນີ້ໃຫ້ຊາວ ອິສຣາເອນ ຟັງຈົນຈົບ

# ບົດທີ 32

1 ແຜ່ນດິນ ແລະທ້ອງຟ້າ
ຈົ່ງຟັງສຽງຂ້າພະເຈົ້າ ໃຫ້ຟັງຂ້າພະເຈົ້າໃກ້ໆ.
2 ຄຳສອນຂອງຂ້າພະເຈົ້າຈະຕົກລົງເໝືອນເມັດຝົນ
ຈະກໍ່ຕົວຢູ່ເທິງໂລກເໝືອນນ້ຳໝອກ ຄຳເວົ້າຂອງ
ຂ້າພະເຈົ້າຈະຕົກລົງມາເທິງຫຍ້າອ່ອນ
ເໝືອນຝົນເໝືອນຫ່າຝົນໂຮຍລົງເທິງຫຍ້າຂຽວ.
3 ຂ້າພະເຈົ້າຈະສັນລະເສີນພຣະນາມ ພຣະຜູ້ເປັນເຈົ້າ
ໄພ່ພົນຂອງພຣະອົງຈະປະກາດຄວາມຍິ່ງໃຫຍ່ຂອງພຣະອົງ.
4 ພຣະຜູ້ເປັນເຈົ້າຊົງເປັນທີ່ເພິ່ງອັນຍິ່ງໃຫຍ່
ຂອງພວກເຈົ້າ ທາງທັງຫລາຍຂອງພຣະອົງກໍສົມບູນ ແລະຖືກຕ້ອງ
ພຣະເຈົ້າຂອງພວກເຈົ້າຊົງສັດຊື່
ແລະທ່ຽງທຳ ຊົງເຮັດແຕ່ສິ່ງຖືກຕ້ອງ ແລະດີງາມ.
5 ແຕ່ພວກເຈົ້າເຮັດບໍ່ສັດຊື່ ບໍ່ເໝາະສົມທີ່ຈະເປັນໄພ່ພົນ
ຂອງພຣະອົງ ເປັນຊົນຊາດບາບ ແລະຄົດໂກງ.
6 ຊົນຊາດໂງ່ຈ້າເບົາປັນຍາເອີຍ ພວກເຈົ້າ
ຈະເຮັດຕໍ່ພຣະຜູ້ເປັນເຈົ້າຢ່າງນີ້ບໍ?
ພຣະອົງຊົງເປັນພໍ່ ແລະຜູ້ສ້າງເຈົ້າ
ຊົງສ້າງເຈົ້າໃຫ້ເປັນຊົນຊາດໜຶ່ງ.

7 ຈົ່ງລະນຶກເຖິງ ຄາວອະດີດຕະການທີ່ລ່ວງມາເຫິງແລ້ວ
ຈົ່ງຮ້ອງຂໍໃຫ້ພໍ່ຂອງເຈົ້າບອກສິ່ງທີ່ເກີດຂຶ້ນ
ແລະຮ້ອງຂໍໃຫ້ພວກຜູ້ເຖົ້າເລົ່າເລື່ອງໃນອະດີດ.
8 ຜູ້ສູງສຸດຊົງໃຫ້ທຸກຊາດມີແຜ່ນດິນຂອງຕົນເອງ
ຊົງໃຫ້ພວກເຂົາມີບ່ອນຢູ່ເປັນຂອງຕົນເອງ ພຣະອົງຊົງມອບ
ໝາຍໃຫ້ແຕ່ລະຊົນຊາດມີເທວະດາອົງໜຶ່ງ.
9 ແຕ່ຊົງເລືອກເອົາເຊື້ອສາຍຢາໂຄບ ເປັນຂອງພຣະອົງເອງ.

10 ພຣະອົງຊົງພົບເຫັນພວກເຂົາທ່ອງທ່ຽວໄປມາ
ໃນຖິ່ນແຫ້ງແລ້ງກັນດານ ໃນບ່ອນເປົ່າປ່ຽວລົມແຮງ
ຊົງຄຸ້ມຄອງ ແລະເບິ່ງແຍງພວກເຂົາ ຊົງເອົາໃຈໃສ່ພວກເຂົາ
ຄືກັບພຣະເນດຂອງພຣະອົງ.
11 ເໝືອນນົກອິນທີສອນລູກໃຫ້ບິນ ມັນບິນລົງຮັງ
ແລະໃຫ້ລູກເກາະຢູ່ເທິງປີກຢ່າງປອດໄພ
ພຣະຜູ້ເປັນເຈົ້າຊົງຮັກສາອິສຣາເອນບໍ່ໃຫ້ເສຍໄປ.
12 ພຣະເຈົ້າອົງດຽວໄດ້ຊົງນຳໄພ່ພົນຂອງພຣະອົງ
ມາໂດຍປາດສະຈາກຄວາມຊ່ອຍເຫລືອ
ຂອງພະຕ່າງດ້າວ.
13 ພຣະອົງຊົງໃຫ້ພວກເຂົາປົກຄອງແຜ່ນດິນອັນກວ້າງໃຫຍ່
ແລະໄດ້ກິນພືດຜົນທີ່ເກີດໃນນາ ພວກເຂົາໄດ້ພົບຮັງເຜິ້ງ
ຢູ່ຕາມໂງ່ນຫີນ ຕົ້ນໝາກກອກ
ຂອງເຂົາໄດ້ເກີດຂຶ້ນໃນດິນແຂງ.
14 ຝູງງົວແລະແບ້ໃຫ້ນ້ຳນົມຢ່າງພຽງພໍ ພວກເຂົາມີແກະແບ້
ແລະງົວຕູ້ຍພີດີ ມີເຂົ້າບາເລ ແລະເຫລົ້າອະງຸ່ນດີທີ່ສຸດ.

15 ໄພ່ພົນຂອງພຣະຜູ້ເປັນເຈົ້າໄດ້ຮັ່ງມີສົມບູນ
ແລະເປັນກະບົດ ພວກເຂົາຕຸ້ຍ
ແລະກິນຫລາຍ ໄດ້ປະຖິ້ມພຣະເຈົ້າຜູ້ຊົງສ້າງພວກເຂົາ
ແລະປະຖິ້ມພຣະຜູ້ຊ່ອຍອົງຍິ່ງໃຫຍ່ຂອງຕົນ.
16 ພຣະຜູ້ເປັນເຈົ້າຊົງກຽດຊັງທີ່ພວກເຂົາຂາບໄຫວ້ຮູບເຄົາລົບ
ຊົງພຣະພິໂລດທີ່ພວກເຂົາເຮັດຊົ່ວ.
17 ພວກເຂົາບູຊາພະອື່ນທີ່ບໍ່ມີປະໂຫຍດ
ຄືພະທີ່ອິສຣາເອນບໍ່ເຄີຍຂາບໄຫວ້ມາກ່ອນ
ແລະປູ່ຍ່າຕາຍາຍຂອງພວກເຂົາບໍ່ເຄີຍຢຳເກງ.
18 ພວກເຂົາຫລົງລືມພຣະເຈົ້າອົງຊົງຊ່ອຍຄຸ້ມຄອງ

ຂອງຕົນ ອົງຊົງໃຫ້ຊີວິດແກ່ພວກເຂົາ.
19 ເມື່ອພຣະຜູ້ເປັນເຈົ້າເຫັນດັ່ງນີ້ ກໍຊົງພຣະພິໂລດ
ແລະຊົງປະຖິ້ມລູກຊາຍຍິງຂອງພວກເຂົາ.
20 ພຣະອົງຊົງກ່າວວ່າເຮົາຈະບໍ່ຊ່ອຍພວກເຂົາອີກຕໍ່ໄປ
ເພາະວ່າເຂົາດື້ ແລະບໍ່ສັດຊື່
ເຮົາຈະຊອມເບິ່ງວ່າພວກເຂົາຈະເຮັດແນວໃດ.
21 ພວກເຂົາໄດ້ເຮັດໃຫ້ເຮົາໂກດຮ້າຍຍ້ອນຮູບເຄົາລົບ
ເຮົາກຽດຊັງພວກເຂົາຍ້ອນມີພະຢ່າງນັ້ນ ຊຶ່ງບໍ່ແມ່ນພຣະແທ້ເລີຍ
ດັ່ງນັ້ນ ເຮົາຈຶ່ງຈະໃຫ້ພວກເຂົາຮ້າຍ
ຍ້ອນຊົນຊາດໂງ່ຈະເຮັດໃຫ້ພວກເຂົາມີໃຈອິດສາ ພວກທີ່ບໍ່ມີຊາດ.
22 ຄວາມໂກດຮ້າຍຂອງເຮົາຈະຮ້າຍແຮງ
ເໝືອນໄຟຈະໄໝ້ທຸກໆສິ່ງເທິງໂລກໃຫ້ໝົດ
ໄປ ມັນຈະລຸກລາມໄປ
ຈົນເຖິງພິພົບຄົນຕາຍ ແລະຈະໄໝ້ລົງໄປເຖິງຮາກພູ.

23 ເຮົາຈະນຳໄພວິບັດອັນເຫລືອຄຳພັນລະນາມາຍັງພວກເຂົາ
ຈະໃຊ້ລູກທະນູຍິງໃສ່ພວກເຂົາ.
24 ພວກເຂົາຈະຕາຍຍ້ອນຄວາມອຶດຢາກ ແລະເຈັບໄຂ
ຍ້ອນໂຣກໄພໄຂ້ເຈັບອັນຮ້າຍແຮງ
ເຮົາຈະໃຫ້ສັດປ່າມາທຳຮ້າຍພວກເຂົາ
ແລະໃຫ້ງູພິດມາຂົບຕອດພວກເຂົາ.
25 ຈະມີການຮົບເສິກກັນຕາມຖະໜົນຫົນທາງ
ໃນບ້ານເຮືອນຈະມີແຕ່ຄວາມຢ້ານ ພວກຊາຍໜຸ່ມຍິງສາວ
ກໍຈະຕາຍແມ່ນແຕ່ເດັກອ່ອນ ແລະຜູ້ເຖົ້າກໍຈະບໍ່ເຫລືອ.
26 ເຮົາຈະທຳລາຍພວກເຂົາໃຫ້ໝົດສິ້ນໄປເພື່ອຈະບໍ່ມີໃຜໄດ້ລະນຶກເຖິງພວກເຂົາ.
27 ແຕ່ເຮົາຈະບໍ່ໃຫ້ສັດຕູຄຸບອວດອ້າງໄດ້
ວ່າພວກເຂົາໄດ້ຊະນະໄພ່ພົນຂອງເຮົາ
ແລະວ່າເຮົາກຳຈັດພວກເຂົາບໍ່ໄດ້.

28-29 ອິສຣາເອນເປັນຊົນຊາດຂາດສະຕິປັນຍາ
ແລະບໍ່ມີຄວາມສະຫລາດເລີຍ.
30 ພວກເຂົາບໍ່ຮູ້ເລີຍວ່າເປັນຫຍັງ
ຈຶ່ງພ່າຍແພ້ໄປ ບໍ່ເຂົ້າໃຈໃນສິ່ງທີ່ບັງເກີດຂຶ້ນ.
31 ເປັນຫຍັງຄົນຜູ້ດຽວຈຶ່ງຊະນະຄົນເປັນພັນຄົນເປັນໝື່ນ
ຈຶ່ງພ່າຍແພ້ຄົນສອງຄົນ ກໍເພາະວ່າພຣະຜູ້ເປັນເຈົ້າ

ຂອງພວກເຂົາໄດ້ປະຖິ້ມພວກເຂົາແລ້ວ ພຣະເຈົ້າ ອົງຍິ່ງໃຫຍ່ໄດ້ໃຫ້ພວກເຂົາພ່າຍແພ້.
32 ສັດຕູຂອງພວກເຂົາຮູ້ວ່າພະຂອງຕົນອ່ອນແອ
ບໍ່ມີອຳນາດຄືກັບ ພຣະເຈົ້າ ຂອງ ອິສຣາເອນ.
ພວກເຂົາຖືກທຳລາຍເສຍຫາຍຄືກັບເມືອງ ໂຊໂດມ
ແລະເມືອງ ໂກໂມຣາຄືກັບຕົ້ນອະງຸ່ນ
ທີ່ເກີດໝາກຂົມແລະເປັນພິດ
ຊຶ່ງຄອຍຖ້າວັນເວລາເພື່ອລົງໂທດພວກເຂົາ.
33 ປຽບເໝືອນນ້ຳອະງຸ່ນທີ່ມີພິດຮ້າຍຂອງງູເຫົ່າ

34 ເລື່ອງນີ້ບໍ່ໄດ້ສະສົມໄວ້ກັບເຮົາດອກຫລື?
ພຣະອົງຊົງລໍຄອຍເວລາແຫ່ງການພິພາກສາໂທດ.
35 ພຣະອົງຈະຊົງແກ້ແຄ້ນ ແລະລົງໂທດພວກເຂົາ
ເວລາພວກເຂົາຕຳສະດຸດລົ້ມຈະມາຮອດ
ແລ້ວວັນເວລາແຫ່ງການລົງໂທດໃກ້ເຂົ້າມາແລ້ວ.

36 ພຣະຜູ້ເປັນເຈົ້າ ຈະຊົງປ້ອງກັນສິດທິໄພ່ພົນຂອງພຣະອົງ
ເມື່ອຊົງເຫັນວ່າພວກເຂົາໝົດເຫື່ອແຮງ ຈະຊົງເມດຕາປານີ
ຜູ້ຮັບໃຊ້ພຣະອົງ ເມື່ອຊົງເຫັນວ່າບໍ່ມີໃຜເຫລືອຢູ່.
37 ແລ້ວ ພຣະຜູ້ເປັນເຈົ້າ ຈະຊົງຖາມໄພ່ພົນຂອງພຣະອົງວ່າ,
"ພະທີ່ມີອຳນາດທີ່ເຈົ້ານັບຖືນັ້ນຢູ່ໃສ?
38 ຄືພະທີ່ເຈົ້າຖວາຍໄຂມັນເປັນເຄື່ອງບູຊາ
ແລະຖວາຍເຫລົ້າອະງຸ່ນໃຫ້ດື່ມ ຈົ່ງເອົາມັນມາຊ່ອຍເຈົ້າດຽວນີ້
ໃຫ້ມັນມາຊ່ອຍຊີວິດຂອງເຈົ້າສາ."

39 ບັດນີ້ ເບິ່ງແມ! ແມ່ນເຮົາຜູ້ດຽວເປັນ ພຣະເຈົ້າ
ບໍ່ມີພະແທ້ອົງອື່ນອີກ
ເອົາຄວາມຕາຍ ແລະໃຫ້ຊີວິດແກ່ພວກເຈົ້າ
ໃຫ້ບາດເຈັບ ແລະປົວໃຫ້ດີ ບໍ່ມີໃຜຂັດຂວາງເຮົາໄດ້.
40 ແນ່ນອນ ເຮົາເປັນ ພຣະເຈົ້າ ຜູ້ມີຊີວິດ
ຢູ່ ເຮົາຍົກມືຂຶ້ນສາບານວ່າ,
41 ຈະຝົນດາບຂອງເຮົາໃຫ້ຄົມໆ
ແລະຈະເປັນຜູ້ພິພາກສາ
ເຮົາຈະແກ້ແຄ້ນສັດຕູຂອງເຮົາ ຈະລົງໂທດຜູ້ກຽດຊັງເຮົາ.
42 ເລືອດຂອງພວກເຂົາຈະໄຫລອອກຍ້ອນລູກທະນູຂອງເຮົາ ດາບຂອງເຮົາ
ຈະຂ້າຜູ້ທີ່ຂັດຂວາງເຮົາ

ເຮົາຈະບໍ່ໄວ້ຊີວິດຜູ້ທີ່ຕໍ່ສູ້ເຮົາແມ່ນແຕ່ຜູ້ບາດເຈັບ
ແລະພວກຊະເລີຍກໍຈະຕາຍ.
43 ຊົນຊາດທັງຫລາຍເອີຍ ຈົ່ງສັນລະເສີນຍ້ອງຍໍໄພ່ພົນ
ຂອງ ພຣະຜູ້ເປັນເຈົ້າພຣະອົງຊົງລົງໂທດຄົນທັງປວງທີ່ຂ້າພວກເຂົາ
ຊົງແກ້ແຄ້ນສັດຕູຂອງພຣະອົງ
ແລະຊົງໃຫ້ອະໄພບາບແກ່ໄພ່ພົນຂອງພຣະອົງ.”

44ໂມເຊກັບໂຢຊວຍລູກຂອງນູນ ໄດ້ຮ້ອງເພງນີ້ໃຫ້ປະຊາຊົນອິສຣາເອນຟັງ.

## ບົດເພງຂອງໂມເຊ

45ເມື່ອໂມເຊເລົ່າຄຳສອນຂອງພຣະຜູ້ເປັນເຈົ້າ ໃຫ້ປະຊາຊົນຟັງສຸດແລ້ວ. 46ລາວກໍເວົ້າວ່າ,
“ຈົ່ງເຮັດຕາມຂໍ້ຄຳສັ່ງທີ່ຂ້າພະເຈົ້າໄດ້ໃຫ້ພວກທ່ານແລ້ວ ໃນມື້ນີ້ ໃຫ້ບອກສອນລູກຫລານຂອງ
ພວກທ່ານດ້ວຍ ເພື່ອພວກເຂົາຈະໄດ້ເຮັດຕາມຄຳສອນຂອງພຣະເຈົ້າດ້ວຍເອົາໃຈໃສ່. 47ຄຳ
ສອນນີ້ບໍ່ແມ່ນຂອງບໍ່ມີປະໂຫຍດ ແຕ່ມັນເປັນຊີວິດຈິດໃຈຂອງທ່ານແທ້ ສະນັ້ນ ຈົ່ງເຮັດຕາມ
ເພື່ອພວກທ່ານຈະໄດ້ມີອາຍຸໝັ້ນຍືນຢູ່ໃນແຜ່ນດິນຟາກແມ່ນໍ້າຢໍແດນ ຊຶ່ງພວກທ່ານກຳລັງຕຽມ
ຈະເຂົ້າໄປຍຶດຄອງເອົານັ້ນ.”

48-49ໃນມື້ນັ້ນ ພຣະຜູ້ເປັນເຈົ້າຊົງບອກໂມເຊວ່າ “ຈົ່ງຂຶ້ນໄປເທິງພູອາບາຣິມໃນປະເທດ
ໂມອາບ ຊຶ່ງຢູ່ກົງກັນຂ້າມກັບເມືອງເຢຣິໂກ ໃຫ້ປີນຂຶ້ນໄປເຖິງຍອດພູເນໂບ ແລ້ວຫລຽວເບິ່ງ
ປະເທດການາອານທີ່ເຮົາຈະຍົກໃຫ້ປະຊາຊົນອິສຣາເອນ. 50ເຈົ້າຈະຕາຍຢູ່ເທິງພູໜ່ວຍນັ້ນ
ເໝືອນກັບອາໂຣນອ້າຍຂອງເຈົ້າຕາຍຢູ່ເທິງພູໂຮເຣ 51ເພາະວ່າຢູ່ຕໍ່ໜ້າຄົນອິສຣາເອນເຈົ້າທັງ
ສອງບໍ່ເຊື່ອເຮົາ ເມື່ອຢູ່ທີ່ແມ່ນໍ້າເມຣິບາ ໃກ້ເມືອງກາເດັດໃນຖິ່ນແຫ້ງແລ້ງກັນດານຊິນ ພວກ
ເຈົ້າບໍ່ໄດ້ເຄົາລົບເຮົາຕໍ່ໜ້າຄົນທັງຫລາຍ 52ເຈົ້າຈະຫລຽວເຫັນແຜ່ນດິນນັ້ນໃນໄລຍະໄກ ແຕ່ເຈົ້າ
ຈະບໍ່ໄດ້ເຂົ້າໄປໃນແຜ່ນດິນທີ່ເຮົາຈະຍົກໃຫ້ຊາວອິສຣາເອນ.”

# ບົດທີ 33

## ຄຳສອນເທື່ອສຸດທ້າຍຂອງໂມເຊ

1ກ່ອນໂມເຊຄົນຂອງພຣະເຈົ້າໃກ້ຈະຕາຍ ລາວໄດ້ອວຍພອນໃຫ້ຄົນອິສຣາເອນດັ່ງຕໍ່ໄປນີ້:
2ພຣະຜູ້ເປັນເຈົ້າສະເດັດມາຈາກພູຊີນາຍຊົງຂຶ້ນມາເໝືອນຕາເວັນສ່ອງແສງເທິງເມືອງເສອີ
ຊົງສ່ອງແສງຈາກພູປາຣານມາຍັງໄພ່ພົນຂອງພຣະອົງ ມີພວກເທວະດາເປັນໝື່ນໆ ຢູ່ກັບ
ພຣະອົງ ແລະມີໄຟລຸກຮຸ່ງເຮືອງຢູ່ໃກ້ພຣະຫັດເບື້ອງຂວາຂອງພຣະອົງ.
3ພຣະຜູ້ເປັນເຈົ້າຊົງຮັກໄພ່ພົນຂອງພຣະອົງ ຊົງປົກປ້ອງຄຸ້ມຄອງຄົນຂອງພຣະອົງ ດັ່ງນັ້ນ
ພວກເຮົາຈຶ່ງນ້ອມລົງຕໍ່ພຣະບາດຂອງພຣະອົງ ແລະເຮັດຕາມຂໍ້ຄຳສັ່ງຂອງພຣະອົງ.
4ພວກເຮົາເຊື່ອຟັງພຣະທຳທີ່ໂມເຊມອບໃຫ້ມັນເປັນສົມບັດອັນລໍ້າຄ່າແຫ່ງຊົນຊາດຂອງເຮົາ.
5ພຣະຜູ້ເປັນເຈົ້າຊົງເປັນກະສັດຂອງອິສຣາເອນໄພ່ພົນຂອງພຣະອົງ ເມື່ອຜູ້ນຳ ແລະເຜົ່າ
ຕ່າງໆ ຂອງພວກເຂົາຊຸມນຸມກັນ.

6ໂມເຊໄດ້ເວົ້າເຖິງຕະກູນຣູເບັນວ່າ,
“ຂໍຢ່າໃຫ້ຣູເບັນຕາຍແລະຢ່າໃຫ້ຄົນຂອງລາວມີນ້ອຍ.”
7ເວົ້າເຖິງຕະກູນຢູດາວ່າ,
“ໂອ ພຣະຜູ້ເປັນເຈົ້າ ຂໍຊົງຟັງສຽງຮ້ອງໄຫ້ຂໍຄວາມຊ່ອຍເຫລືອຂອງພວກເຂົາ
ແດ່ທ້ອນ ຈົ່ງຮວບຮວມເອົາພວກເຂົາເຂົ້າກັບຕະກູນອື່ນໆ ອີກ ໂອ ພຣະຜູ້-
ເປັນເຈົ້າ ຂໍຊົງຕໍ່ສູ້ແທນພວກເຂົາແລະຊົງຕໍ່ສູ້ພວກສັດຕູຊ່ອຍເຂົາເຈົ້າ.”
8ເວົ້າເຖິງຕະກູນເລວີວ່າ,
“ໂອ ພຣະຜູ້ເປັນເຈົ້າ ຂໍຊົງເປີດເຜີຍພຣະປະສົງຂອງພຣະອົງຜ່ານພວກເລວີ
ພວກເຂົາເປັນໄພ່ພົນຜູ້ສັດຊື່ຂອງພຣະອົງ ພຣະອົງຊົງທົດສອບພວກເຂົາແລ້ວທີ່
ມາສາ ແລະໄດ້ຊົງພິສູດເບິ່ງພວກເຂົາແລ້ວທີ່ນໍ້າອອກບໍ່ເມຣີບາ. 9ພວກເຂົາມີ
ຄວາມສັດຊື່ຕໍ່ພຣະອົງຫລາຍກວ່າຕໍ່ພໍ່ແມ່ອ້າຍນ້ອງ ຫລືລູກຫລານໄດ້ເຮັດຕາມຂໍ້
ຄໍາສັ່ງຂອງພຣະອົງ ແລະສັດຊື່ຕໍ່ຄໍາໝັ້ນສັນຍາຂອງພຣະອົງ. 10ພວກເຂົາຈະ
ບອກສອນໃຫ້ໄພ່ພົນຂອງພຣະອົງເຮັດຕາມພຣະທຳ ແລະຈະຖວາຍບູຊາເທິງ
ແທ່ນຂອງພຣະອົງ. 11ໂອ ພຣະຜູ້ເປັນເຈົ້າ ຂໍຊົງຊ່ອຍໃຫ້ພວກເຂົາແຂງແຮງ
ຂຶ້ນຂໍຊົງຍິນດີໃນສິ່ງທີ່ພວກເຂົາເຮັດ ຊົງທຳລາຍສັດຕູໃຫ້ໝົດກ້ຽງ ແລະຢ່າໃຫ້
ພວກເຂົາໂງຄໍຂຶ້ນໄດ້ອີກ.”
12ເວົ້າເຖິງຕະກູນເບັນຢາມິນວ່າ,
“ພຣະຜູ້ເປັນເຈົ້າຊົງຮັກ ແລະຄຸ້ມຄອງຕະກູນນີ້ ໃນແຕ່ລະມື້ ພວກເຂົາມີຊີວິດຢູ່
ຢ່າງປອດໄພຊ້ອງພຣະພັກພຣະຜູ້ເປັນເຈົ້າ.”
13ເວົ້າເຖິງຕະກູນໂຢເຊັບວ່າ,
“ຂໍພຣະຜູ້ເປັນເຈົ້າຊົງອວຍພອນໃຫ້ແຜ່ນດິນຂອງພວກເຂົາມີຝົນຕົກ ແລະນໍ້າ
ບາດານ. 14ຂໍຊົງອວຍພອນໃຫ້ແຜ່ນດິນຂອງພວກເຂົາໄດ້ຮັບໝາກຜົນຈາກ
ຕາເວັນ ແລະໄດ້ຮັບໝາກຜົນຢ່າງດີທີ່ສຸດໃນທຸກລະດູ. 15ຂໍຊົງໃຫ້ໜ່ວຍພູອັນ
ເກົ່າແກ່ທັງຫລາຍຂອງພວກເຂົາເຕັມໄປດ້ວຍເຄື່ອງປູກຢ່າງດີ. 16ຂໍໃຫ້ແຜ່ນດິນ
ນັ້ນເຕັມໄປດ້ວຍຂອງດີ ຂໍໃຫ້ພຣະຄຸນທີ່ພຣະຜູ້ເປັນເຈົ້າຊົງກ່າວອອກມາຈາກ
ໄຟໃນພຸ່ມໄມ້ ຄໍາອວຍພອນເຫລົ່ານີ້ໃຫ້ຕະກູນໂຢເຊັບເພາະວ່າລາວເປັນຫົວໜ້າ
ພວກອ້າຍນ້ອງຂອງຕົນ. 17ໂຢເຊັບມີເຫື່ອແຮງເໝືອນງົວເຖິກ ມີກຳລັງເໝືອນ
ຄວາຍປ່າ ມານາເຊມີກຳລັງຫລາຍພັນຄົນແລະ ເອຟຣາຢິມມີຫລາຍໝື່ນຄົນ ໂຢ-
ເຊັບຂັບໄລ່ຊົນຊາດອື່ນອອກໄປດ້ວຍກຳລັງນັ້ນ ໄດ້ຂັບໄລ່ພວກເຂົາໄປຈົນສຸດ
ແຜ່ນດິນໂລກ.”
18ເວົ້າເຖິງຕະກູນເຊບູລູນ ແລະອິດຊາຄາວ່າ,
“ຂໍໃຫ້ການຄ້າຂາຍທາງທະເລຂອງເຊບູລູນຈະເລີນກ້າວໜ້າ ແລະຂໍໃຫ້ລາຍໄດ້

ໃນຄອບຄົວອິດຊາຄາເພີ່ມທະວີຫລາຍຂຶ້ນ. [19]ພວກເຂົາເຊີນຊາດທັງຫລາຍມາ
ທີ່ພູເຂົາ ແລ້ວຖວາຍເຄື່ອງບູຊາຢ່າງຖືກຕ້ອງຢູ່ທີ່ນັ້ນ ເພາະວ່າພວກເຂົາຮັ່ງມີ
ຍ້ອນທະເລ ແລະດິນຊາຍຕາມຝັ່ງ.”

[20]ເວົ້າເຖິງຕະກູນຄາດວ່າ,

“ສັນລະເສີນພຣະເຈົ້າຜູ້ຊົງຂະຫຍາຍເຂດແດນຂອງຊາວຄາດ ພວກເຂົາໝູບຢູ່
ເໝືອນສິງເພື່ອຄອຍຖ້າທັກແຂນ ແລະລອກໜັງຫົວ. [21]ພວກເຂົາເລືອກເອົາ
ແຜ່ນດິນທີ່ອຸດົມສົມບູນ ແລະຮັ່ງມີເປັນຂອງຕົນເອງ ສ່ວນແບ່ງຂອງຜູ້ນຳກໍເປັນ
ຂອງພວກເຂົາ ເມື່ອພວກຜູ້ນຳອິສຣາເອນ ເຂົ້າຮ່ວມປະຊຸມກັນພວກເຂົາກໍເຮັດ
ຕາມພຣະທຳ ແລະຂໍ້ຄຳສັ່ງຂອງພຣະຜູ້ເປັນເຈົ້າ”

[22]ເວົ້າເຖິງຕະກູນດານວ່າ,

“ດານເປັນລູກສິງທີ່ແລ່ນເຕັ້ນມາຈາກບາຊານ.”

[23]ເວົ້າເຖິງຕະກູນນັບທາລີວ່າ,

“ນັບທາລີອີ່ມບໍລິບູນດ້ວຍພຣະຄຸນທີ່ພຣະຜູ້ເປັນເຈົ້າອວຍພອນໃຫ້ ແຜ່ນດິນ
ຂອງພວກເຂົາຍາວຢຽດໄປເຖິງທະເລສາບຄາລີເລທາງໃຕ້.”

[24]ເວົ້າເຖິງຕະກູນອາເຊວ່າ,

“ອາເຊໄດ້ຮັບພຣະພອນຫລາຍກວ່າຕະກູນອື່ນ ຂໍໃຫ້ພວກເຂົາໄດ້ຮັບຄວາມເມດ
ຕາປານີຈາກອ້າຍນ້ອງຂອງຕົນ ຂໍໃຫ້ແຜ່ນດິນຂອງພວກເຂົາອຸດົມສົມບູນໄປ
ດ້ວຍຕົ້ນໝາກກອກເທດ. [25]ຂໍໃຫ້ເມືອງຂອງພວກເຂົາມີປະຕູເຫລັກເປັນທີ່ປ້ອງ
ກັນແລະໃຫ້ພວກເຂົາມີຊີວິດຢູ່ດ້ວຍຄວາມປອດໄພຕະຫລອດໄປ.”

[26]ອິສຣາເອນເອີຍ ບໍ່ມີພະໃດເໝືອນພຣະເຈົ້າຂອງທ່ານພຣະອົງສະເດັດມາທາງທ້ອງຟ້າ
ດ້ວຍສະຫງ່າລາສີສະເດັດຜ່ານເມກມາຊ່ອຍເຫລືອທ່ານ.

[27]ພຣະເຈົ້າຊົງເປັນອົງຄຸ້ມຄອງທ່ານຕະຫລອດໄປ ແຂນອັນຊົງລິດຂອງພຣະອົງຈະອູ້ມຊູ
ທ່ານໄວ້ ພຣະອົງຊົງຂັບໄລ່ສັດຕູໃຫ້ໜີໄປຈາກທ່ານ ແລະຊົງບອກໃຫ້ທ່ານທຳລາຍພວກເຂົາ
ຖິ້ມ.

[28]ດັ່ງນີ້ແຫລະ ເຊື້ອສາຍຂອງຢາໂຄບຈຶ່ງມີຊີວິດຢູ່ດ້ວຍຄວາມສະຫງົບສຸກມີຄວາມປອດໄພຢູ່
ໃນແຜ່ນດິນທີ່ອຸດົມສົມບູນດ້ວຍເຂົ້າ ແລະເຫລົ້າອະງຸ່ນ ມີນ້ຳໝອກຈາກຟ້າຕົກລົງມາຍັງດິນ.

[29]ອິສຣາເອນເອີຍ ທ່ານທັງຫລາຍເປັນສຸກແທ້ ບໍ່ມີໃຜຄືທ່ານເລີຍ ທ່ານເປັນຊົນຊາດທີ່
ພຣະຜູ້ເປັນເຈົ້າຊົງຊ່ອຍ ພຣະອົງຊົງເປັນແຜ່ນເຫລັກຕ້ານທານ ແລະດາບຂອງທ່ານ ຊົງປ້ອງ
ກັນ ແລະໃຫ້ທ່ານມີໄຊຊະນະ ພວກສັດຕູຈະມາຂໍຄວາມກະລຸນາຈາກທ່ານ ແລ້ວທ່ານຈະຢຽບ
ພວກເຂົາລົງ.

# ບົດທີ 34

## ໂມເຊອວຍພອນໃຫ້ເຜົ່າຊົນອິສຣາເອນ

1ໂມເຊໄດ້ຂຶ້ນໄປທີ່ທົ່ງພຽງໂມອາບໄປຍັງພູເນໂບ ຂຶ້ນໄປເຖິງຈອມພູປີຊະກາ ຊຶ່ງຢູ່ກົງຂ້າມ
ກັບເມືອງ ເຢຣິໂກ ຢູ່ທີ່ນັ້ນ ພຣະຜູ້ເປັນເຈົ້າໄດ້ຊົງສະແດງໃຫ້ລາວເຫັນແຜ່ນດິນທັງໝົດ ຄື
ຕັ້ງແຕ່ເຂດແດນກີເລອາດໄປຮອດທິດເໜືອເມືອງດານ. 2ເຖິງເຂດແດນນັບທາລີທັງໝົດ ຕະ-
ຫລອດທັງເຂດແດນເອຟຣາຢິມ ມານາເຊແລະຢູດາ ໄປເຖິງທະເລເມດີແຕຣາເນ. 3ທາງທິດ-
ຕາເວັນຕົກ ທາງພາກໃຕ້ຢູດາ ແລະຈາກທົ່ງພຽງເມືອງໄຊອາ ຮອດເມືອງເຢຣິໂກ ຄືເມືອງຕົ້ນ
ຕານນັ້ນ. 4ແລ້ວພຣະຜູ້ເປັນເຈົ້າກ່າວຕໍ່ໂມເຊວ່າ, "ນີ້ແມ່ນແຜ່ນດິນທີ່ເຮົາໄດ້ສັນຍາຕໍ່ອັບຣາ-
ຮາມ ອີຊາກ ແລະຢາໂຄບ ວ່າຈະຍົກໃຫ້ແກ່ເຊື້ອສາຍຂອງລາວ ເຮົາໄດ້ເຮັດໃຫ້ເຈົ້າເຫັນກັບ
ຕາ ແຕ່ຈະບໍ່ໃຫ້ເຈົ້າເຂົ້າໄປໃນແຜ່ນດິນນັ້ນ."

5ດັ່ງນັ້ນ ໂມເຊຜູ້ຮັບໃຊ້ຂອງພຣະຜູ້ເປັນເຈົ້າ ຈຶ່ງໄດ້ສິ້ນຊີວິດຢູ່ທີ່ນັ້ນໃນປະເທດໂມອາບ
ຕາມທີ່ພຣະຜູ້ເປັນເຈົ້າໄດ້ຊົງບອກແລ້ວ. 6ພຣະຜູ້ເປັນເຈົ້າຊົງຝັງສົບເພິ່ນໄວ້ໃນຮ່ອມພູແຫ່ງໜຶ່ງ
ທີ່ປະເທດໂມອາບ ຊຶ່ງຢູ່ກົງກັນຂ້າມກັບເມືອງເບັດ-ເປໂອ ແຕ່ຈົນເທົ່າທຸກມື້ນີ້ກໍບໍ່ມີໃຜຮູ້ວ່າສົບ
ໂມເຊໄດ້ຝັງໄວ້ຢູ່ໃສ? 7ໂມເຊຕາຍເມື່ອອາຍຸໄດ້ຮ້ອຍຊາວປີ ເພິ່ນມີສຸຂະພາບແຂງແຮງ ແລະ
ຕາກໍຍັງເຫັນຮຸ່ງຢູ່ຄືເກົ່າ. 8ຊາວອິສຣາເອນໄດ້ໄວ້ທຸກໃຫ້ໂມເຊເປັນເວລາສາມສິບມື້ ທີ່ທົ່ງພຽງ
ໂມອາບ.

9ໂຢຊວຍ ຊຶ່ງເປັນຜູ້ໄດ້ຮັບໜ້າທີ່ແທນໂມເຊ ຍ້ອນວ່າເພິ່ນໄດ້ເປັນຜູ້ມີສະຕິປັນຍາດີໂດຍ
ເພິ່ນໄດ້ຮັບພິທີວາງມືໃສ່ຫົວຈາກໂມເຊ ຊາວອິສຣາເອນຈຶ່ງໄດ້ເຊື່ອຟັງໂຢຊວຍ ແລະເຮັດຕາມຂໍ້
ຄຳສັ່ງທີ່ພຣະຜູ້ເປັນເຈົ້າຊົງບອກໂມເຊນັ້ນ. 10ໃນອິສຣາເອນບໍ່ເຄີຍມີຜູ້ປະກາດພຣະທຳຄົນໃດ
ຄືໂມເຊ ພຣະຜູ້ເປັນເຈົ້າຊົງກ່າວກັບເພິ່ນໜ້າຕໍ່ໜ້າ. 11ຊົງໃຫ້ເພິ່ນເຮັດການອັດສະຈັນ ແລະ
ໝາຍສຳຄັນຕໍ່ສູ້ກະສັດເອຢິບ ກັບຂ້າລາຊະການ ແລະໝົດປະເທດຊຶ່ງຜູ້ປະກາດພຣະທຳອື່ນໆ
ເຮັດບໍ່ໄດ້ເພິ່ນ. 12ບໍ່ມີຜູ້ປະກາດພຣະຄຳຄົນໃດ ທີ່ສາມາດເຮັດສິ່ງອັນຍິ່ງໃຫຍ່ ແລະ ສິ່ງອັນໜ້າ
ຢ້ານກົວນີ້ໄດ້ ຄືກັບໂມເຊໄດ້ເຮັດຕໍ່ຫນ້າອິສຣາເອນທັງໝົດ

* * *

# ໂຢຊວຍ

## ບົດທີ 1

### ພວກອິສຣາເອນມຸ່ງໜ້າສູ່ປະເທດການາອານ

1ຫລັງຈາກ ໂມເຊ ຜູ້ຮັບໃຊ້ຂອງ ພຣະຜູ້ເປັນເຈົ້າ ໄດ້ເສຍຊີວິດໄປແລ້ວ ພຣະຜູ້ເປັນເຈົ້າ ຊົງ
ສັ່ງແກ່ ໂຢຊວຍ ລູກຂອງ ນູນ ທີ່ເປັນຜູ້ຊ່ອຍວຽກ ໂມເຊ ວ່າ, 2"ໂມເຊ ຜູ້ຮັບໃຊ້ຂອງເຮົາກໍເສຍຊີວິດ
ໄປແລ້ວ ສ່ວນເຈົ້າພ້ອມດ້ວຍຊາວ ອິສຣາເອນ ທຸກຄົນ ຈົ່ງຕຽມຕົວອອກໄປຂ້າມແມ່ນ້ຳ ຢໍແດນ
ແລ້ວເຂົ້າໄປໃນແຜ່ນດິນທີ່ເຮົາຈະມອບໃຫ້ພວກເຈົ້າ. 3ຕາມທີ່ເຮົາໄດ້ສັນຍາໄວ້ກັບ ໂມເຊ ວ່າ
ດິນທຸກບ່ອນທີ່ພວກເຈົ້າຈະຢຽບໄປນັ້ນແຫລະເປັນບ່ອນທີ່ເຮົາມອບໃຫ້. 4ເຂດແດນຂອງເຈົ້າຕັ້ງ-
ແຕ່ຖິ່ນກັນດານທາງທິດໃຕ້ ຈົນຮອດພູ ເລບານອນ ທາງທິດເໜືອ ຕັ້ງແຕ່ແມ່ນ້ຳໃຫຍ່ ເອຟຣາດ
ທາງທິດຕາເວັນອອກ ທົ່ວທັງປະເທດຊາວ ຮິດຕີ ຈົນຮອດທະເລ ເມດີແຕຣາເນ ທາງທິດຕາ-
ເວັນຕົກ. 5ໃນຊົ່ວຊີວິດຂອງເຈົ້າ ຈະບໍ່ມີໃຜສາມາດຕໍ່ສູ້ເຈົ້າໄດ້ ເຮົາຈະບໍ່ປະຖິ້ມເຈົ້າ ເພາະວ່າ
ເຮົາໄດ້ສະຖິດຢູ່ກັບ ໂມເຊ ຢ່າງໃດ ເຮົາກໍຈະສະຖິດຢູ່ກັບເຈົ້າຢ່າງນັ້ນດ້ວຍ. 6ສະນັ້ນ ເຈົ້າຈົ່ງມີ-
ໃຈເຂັ້ມແຂງ ແລະກ້າຫານ ເພາະວ່າເຈົ້າຈະເປັນຜູ້ນຳພາຊົນຊາດເຫລົ່ານີ້ເຂົ້າໄປຮັບເອົາແຜ່ນ-
ດິນທີ່ເຮົາສັນຍາວ່າ ຈະມອບໃຫ້ແກ່ປູ່ຍ່າຕາຍາຍຂອງພວກເຂົາ. 7ເຈົ້າຈົ່ງມີໃຈເຂັ້ມແຂງ ແລະ
ກ້າຫານແທ້ ຈົ່ງເຮັດຕາມພຣະທຳທັງໝົດຂອງເຮົາ ຊຶ່ງ ໂມເຊ ຜູ້ຮັບໃຊ້ຂອງເຮົາໄດ້ສັ່ງເຈົ້າໄວ້
ຢ່າປະຖິ້ມຈັກຂໍ້ເລີຍ ເພື່ອຈະໄດ້ຮັບຜົນສຳເລັດໃນທຸກໆ ບ່ອນທີ່ເຈົ້າຈະໄປ. 8ເຈົ້າຢ່າລືມພຣະ-
ທຳຂອງເຮົາຈັກເທື່ອ ເຈົ້າຕ້ອງຮຽນຮູ້ຈາກປຶ້ມພຣະທຳນັ້ນທຸກມື້ທຸກຄືນ ແລະຈົ່ງຕັ້ງໃຈປະຕິບັດ
ຕາມຖ້ອຍຄຳທີ່ຂຽນໄວ້ນັ້ນ ແລ້ວເຈົ້າຈະໄດ້ຮັບຜົນສຳເລັດໃນທຸກວິທີທາງ ພ້ອມທັງມີຄວາມຈະ-
ເລີນກ້າວໜ້າຂຶ້ນດ້ວຍ. 9ຈົ່ງຈົດຈຳເອົາຖ້ອຍຄຳທີ່ເຮົາໄດ້ສັ່ງແກ່ເຈົ້າວ່າ ໃຫ້ມີໃຈເຂັ້ມແຂງ ແລະ
ກ້າຫານ ຢ່າຢ້ານ ຫລືຕົກໃຈເພາະວ່າເຮົາຜູ້ເປັນ ພຣະຜູ້ເປັນເຈົ້າ ຂອງເຈົ້າ ກໍສະຖິດຢູ່ກັບເຈົ້າ
ໃນທຸກຫົນທຸກແຫ່ງທີ່ເຈົ້າຈະໄປເຖິງ."

10-11ເມື່ອນັ້ນ ໂຢຊວຍ ໄດ້ສັ່ງກັບພວກຫົວໜ້າວ່າ ຈົ່ງໄປປ່າວເຕືອນປະຊາຊົນຕາມສະຖານທີ່
ພັກເຊົາ ເພື່ອໃຫ້ພວກເຂົາຈັດແຈງເອົາອາຫານໃຫ້ພຽງພໍ ເພາະວ່າຍັງອີກສາມມື້ພວກເຈົ້າຈະ
ພາກັນຂ້າມແມ່ນ້ຳ ຢໍແດນ ນີ້ໄປຍຶດຄອງເອົາດິນແດນທີ່ ພຣະຜູ້ເປັນເຈົ້າ ຂອງພວກເຈົ້າຊົງປະ-
ທານໃຫ້."

12ຕໍ່ມາ ໂຢຊວຍ ເວົ້າກັບຊາວ ຣູເບັນ ຊາວ ຄາດ ແລະເຄິ່ງໜຶ່ງຂອງຊາວ ມານາເຊ ວ່າ,
13"ຈົ່ງຈື່ຄຳທີ່ ໂມເຊ ຜູ້ຮັບໃຊ້ຂອງ ພຣະຜູ້ເປັນເຈົ້າ ບອກໄວ້ວ່າ ພຣະຜູ້ເປັນເຈົ້າ ຂອງພວກເຈົ້າຊົງ
ປະທານແຜ່ນດິນ ທາງທິດຕາເວັນອອກຂອງ ແມ່ນ້ຳ ຢໍແດນ ນີ້ໃຫ້ພວກເຈົ້າອາໄສຢູ່. 14ໃຫ້ລູກ
ເມຍ ແລະງົວຄວາຍຂອງພວກເຈົ້າພັກພາອາໄສຢູ່ບ່ອນນີ້ເສຍກ່ອນ ຊຶ່ງເປັນແຜ່ນດິນທີ່ ໂມເຊ
ໄດ້ມອບໃຫ້ແລ້ວ ສ່ວນຜູ້ເປັນທະຫານໃຫ້ຂ້າມແມ່ນ້ຳອອກນຳໜ້າໄປຊ່ອຍພວກພີ່ນ້ອງທີ່ຍັງບໍ່ມີ
ບ່ອນຢູ່ ຕີເອົາແຜ່ນດິນທີ່ ພຣະຜູ້ເປັນເຈົ້າ ຂອງພວກເຈົ້າຈະປະທານໃຫ້ພວກເຂົາ. 15ເມື່ອພວກ

ພີ່ນ້ອງໄດ້ແຜ່ນດິນແລ້ວ ພວກເຈົ້າຈຶ່ງກັບຄືນມາຢູ່ໃນແຜ່ນດິນຂອງຕົນເອງຢູ່ທີ່ນີ້ ຊຶ່ງເປັນບ່ອນ
ທີ່ ໂມເຊ ຜູ້ຮັບໃຊ້ຂອງ ພຣະຜູ້ເປັນເຈົ້າ ໄດ້ມອບໃຫ້ພວກເຈົ້າ.”
16ພວກເຂົາຕອບ ໂຢຊວຍ ວ່າ, “ພວກຂ້ານ້ອຍຈະເຮັດທຸກໆ ສິ່ງທີ່ທ່ານບອກ ແລະຈະໄປ
ທຸກໆ ບ່ອນທີ່ທ່ານຈະສົ່ງພວກຂ້ານ້ອຍໄປ. 17ພວກຂ້ານ້ອຍຈະເຊື່ອຟັງຄວາມຂອງທ່ານເໝືອນ
ດັ່ງໄດ້ເຊື່ອຟັງຄວາມຂອງ ໂມເຊ ຂໍພຽງແຕ່ວ່າໃຫ້ ພຣະຜູ້ເປັນເຈົ້າ ຂອງທ່ານສະຖິດຢູ່ກັບທ່ານ
ດັ່ງທີ່ພຣະອົງຊົງສະຖິດຢູ່ກັບ ໂມເຊ. 18ຖ້າຜູ້ໃດຂັດຂວາງ ແລະບໍ່ຍອມຟັງສິ່ງທີ່ທ່ານສັ່ງນັ້ນ ຈະ
ຕ້ອງຖືກໂທດປະຫານຊີວິດ ສ່ວນທ່ານຈົ່ງມີໃຈເຂັ້ມແຂງແລະກ້າຫານເທີ້ນ.”

# ບົດທີ 2

## ໂຢຊວຍສົ່ງຜູ້ສອດແນມໄປເມືອງເຢຣິໂກ

1ຕໍ່ມາ ໂຢຊວຍ ໄດ້ສົ່ງຜູ້ສອດແນມສອງຄົນໄປຢ່າງລັບໆ ຈາກຄ້າຍພັກທີ່ຊິດຕິມ ເພື່ອໄປ
ເບິ່ງປະເທດແລະ ເມືອງ ເຢຣິໂກ ດັ່ງນັ້ນ ຜູ້ສອດແນມທັງສອງຈຶ່ງພາກັນອອກໄປ ເມື່ອຮອດ
ເມືອງ ເຢຣິໂກ ແລ້ວ ພວກເຂົາກໍເຂົ້າໄປພັກເຊົາຢູ່ໃນ ເຮືອນຂອງຍິງສາວ ໂສເພນີຄົນໜຶ່ງຊື່ວ່າ
ຣາຮາບ. 2ເມື່ອເຈົ້າຊີວິດເມືອງ ເຢຣິໂກ ໄດ້ຍິນຂ່າວວ່າ ໃນແລງມື້ນີ້ມີຊາວ ອິສຣາເອນ ສອງຄົນ
ໄດ້ເຂົ້າມາສອດແນມເບິ່ງປະເທດຂອງເຮົາ. 3ພະອົງກໍຈັດສົ່ງຄົນໄປຫານາງ ຣາຮາບ ແລ້ວບອກ
ວ່າ, “ຈົ່ງມອບຊາຍຄົນທີ່ພັກຢູ່ໃນເຮືອນຂອງເຈົ້ານີ້ໃຫ້ເຮົາເສຍ ເພາະວ່າ ພວກເຂົາມາສອດ-
ແນມເບິ່ງປະເທດຂອງເຮົາ.” 4-6ຝ່າຍນາງ ຣາຮາບ ກໍເຊື່ອງຊາຍສອງຄົນນັ້ນໄວ້ເທິງຫລັງຄາພຽງ
ໃນກອງລຳຕົ້ນປ່ານທີ່ນາງໄດ້ລຽນໄວ້ຢູ່ເທິງນັ້ນ ແຕ່ຂ້ານ້ອຍບໍ່ຮູ້ຈັກການເປັນມາຂອງພວກເຂົາ
ດຽວນີ້ ນາງຈຶ່ງຕອບວ່າ, “ຊາຍພວກນັ້ນມາພັກຢູ່ເຮືອນຂອງຂ້ານ້ອຍແທ້ຈິງ ພວກເຂົາໄດ້ອອກ
ໜີໄປແລ້ວຕັ້ງແຕ່ເວລາເຊົ້າມືດ ເພື່ອໃຫ້ທວິດກ່ອນປະຕູເມືອງຈະອັດ ສ່ວນຂ້ານ້ອຍເອງກໍບໍ່ຮູ້-
ຈັກວ່າພວກເຂົາໄປທາງໃດ ຈົ່ງຟ້າວອອກໄປຕິດຕາມພວກເຂົາໃຫ້ທັນ.” 7ດັ່ງນັ້ນ ພວກເຂົາຈຶ່ງ
ຟ້າວອອກຕິດຕາມຈົນຮອດທ່າແມ່ນ້ຳຢໍແດນ ເມື່ອພວກເຂົາອອກທວິດເມືອງແລ້ວປະຕູເມືອງກໍ
ອັດ.
8-9ກ່ອນຊາຍທັງສອງຈະນອນ ນາງ ຣາຮາບ ກໍຂຶ້ນໄປຫາພວກເຂົາຢູ່ເທິງຫລັງຄາພຽງ ແລະ
ເວົ້າວ່າ, “ຂ້ານ້ອຍຮູ້ວ່າ ພຣະຜູ້ເປັນເຈົ້າ ຊົງປະທານແຜ່ນດິນນີ້ໃຫ້ແກ່ພວກທ່ານ ແລະຂ້ານ້ອຍ
ຍອມຮັບວ່າ ພວກຂ້ານ້ອຍທຸກຄົນຢ້ານພວກທ່ານຫລາຍ ແລະຄົນທົ່ວທຸກອານາເຂດກໍເກີດ
ຄວາມຢ້ານຕົກໃຈຕໍ່ໜ້າພວກທ່ານ. 10ເພາະພວກຂ້ານ້ອຍໄດ້ຍິນຂ່າວວ່າ ພຣະຜູ້ເປັນເຈົ້າ ຊົງ
ບັນດານໃຫ້ນ້ຳທະເລ ແດງ ແຫ້ງລົງຕໍ່ໜ້າພວກທ່ານ ໃນຂະນະທີ່ພວກທ່ານເດີນທາງອອກມາ
ຈາກປະເທດ ເອຢິບ ແລະພວກຂ້ານ້ອຍກໍໄດ້ຍິນຂ່າວອີກວ່າ ພວກທ່ານໄດ້ຂ້າເຈົ້າຊີວິດຊາວ
ອະໂມຣິດ ທັງສອງອົງຄື ສີໂຮນ ແລະ ໂອກ ຢູ່ທາງທິດຕາເວັນອອກຂອງແມ່ນ້ຳຢໍແດນ. 11ຍ້ອນ
ພວກຂ້ານ້ອຍໄດ້ຍິນເລື່ອງຕ່າງໆ ນີ້ແຫລະ ທຸກຄົນຈຶ່ງເກີດມີຄວາມວຸ້ນວາຍໃຈ ແລະຢ້ານກົວ
ຕໍ່ໜ້າພວກທ່ານ ເພາະ ພຣະຜູ້ເປັນເຈົ້າ ຂອງພວກທ່ານ ແມ່ນອົງທີ່ສະຖິດຢູ່ເທິງຟ້າສະຫວັນ
ແລະ ແຜ່ນດິນ ໂລກ. 12ບັດນີ້ ຂໍໃຫ້ພວກທ່ານຈົ່ງສາບານຊ້ອງພຣະພັກຂອງ ພຣະຜູ້ເປັນເຈົ້າ

ເນື່ອງຈາກຄວາມດີທີ່ຂ້ານ້ອຍໄດ້ເຮັດຕໍ່ພວກທ່ານນີ້ ຂໍໃຫ້ຄິດເຫັນຂ້ານ້ອຍ ແລະຄອບຄົວຍາດ
ພີ່ນ້ອງຂອງຂ້ານ້ອຍດ້ວຍ ແລະຂໍໃຫ້ສະແດງຫລັກຖານກ່ຽວກັບຄຳສາບານນີ້ແກ່ຂ້ານ້ອຍ.
13ເພື່ອຊ່ອຍພໍ່ແມ່ອ້າຍນ້ອງຕະຫລອດທັງຄອບຄົວຂອງຂ້ານ້ອຍໃຫ້ພົ້ນຈາກຄວາມຕາຍ.” 14ດັ່ງ-
ນັ້ນ ຊາຍທັງສອງຈຶ່ງເວົ້າຕໍ່ນາງວ່າ, “ພວກຂ້ອຍພ້ອມແລ້ວທີ່ຈະຕາຍແທນເຈົ້າ ຖ້າເຈົ້າບໍ່ເປີດ-
ເຜີຍເລື່ອງທີ່ພວກຂ້ອຍເຮັດນີ້ ພວກຂ້ອຍຈະຕອບສະໜອງຄຸນງາມຄວາມດີ ແລະຄວາມສັດຊື່
ຂອງເຈົ້າໃນເວລາທີ່ພຣະຜູ້ເປັນເຈົ້າຊົງປະທານແຜ່ນດິນນີ້ໃຫ້ແກ່ພວກຂ້ອຍ.”

15ເນື່ອງຈາກວ່າເຮືອນຂອງນາງ ຣາຮາບ ຕິດກັບກຳແພງເມືອງລາວຈຶ່ງຢ່ອນເຊືອກໃຫ້ຊາຍ
ທັງສອງລົງທາງປ່ອງຢ້ຽມ. 16ແລະເວົ້າແກ່ພວກເຂົາວ່າ, “ຈົ່ງຂຶ້ນໄປລີ້ຢູ່ເທິງພູນັ້ນສາມມື້ ຈົນ
ພວກທີ່ຕິດຕາມນັ້ນກັບມາເສຍກ່ອນ ເພື່ອພວກເຂົາຈະບໍ່ພົບພໍ້ພວກທ່ານ ຫລັງຈາກນັ້ນ ຈຶ່ງພາ-
ກັນໄປຕາມທົນທາງຂອງພວກທ່ານ.” 17ຜູ້ສອດແນມທັງສອງຈຶ່ງບອກນາງວ່າ, “ພວກຂ້ອຍຈະ
ເຮັດຕາມຄຳສັນຍາທີ່ມີໄວ້ກັບເຈົ້າ. 18ຈົ່ງຟັງເດີ້ ໃນເວລາທີ່ພວກຂ້ອຍກັບມາໂຈມຕີປະເທດນີ້
ເຈົ້າຈົ່ງເອົາເຊືອກສີແດງເຂັ້ມຜູກໄວ້ທີ່ປ່ອງຢ້ຽມບ່ອນທີ່ເຈົ້າຢ່ອນພວກຂ້ອຍລົງນີ້ ແລະໃຫ້ພວກພໍ່
ແມ່ອ້າຍນ້ອງຕະຫລອດທັງຄອບຄົວຂອງເຈົ້າມາໂຮມກັນຢູ່ເຮືອນຫລັງນີ້ໝົດ. 19ຖ້າວ່າຜູ້ໃດ
ອອກຈາກເຮືອນເຈົ້າໄປ ຄວາມຕາຍຈະມາເຖິງຜູ້ນັ້ນຍ້ອນຄວາມຜິດຂອງລາວເອງ ພວກຂ້ອຍ
ຈະບໍ່ຮັບຜິດຊອບ ແຕ່ວ່າ ຖ້າຜູ້ໜຶ່ງຜູ້ໃດຢູ່ໃນເຮືອນຂອງເຈົ້າຖືກຂ້າ ຈຶ່ງແມ່ນຄວາມຜິດຂອງ
ພວກຂ້ອຍ. 20ແລະຖ້າເຈົ້າເປີດເຜີຍສິ່ງທີ່ໄດ້ເຮັດນີ້ ພວກຂ້ອຍກໍຈະຕ້ອງພົ້ນຈາກຄຳສາບແຊ່ງ
ນັ້ນ. 21ນາງຈຶ່ງຕອບວ່າ, “ຂ້ານ້ອຍຍິນຍອມທຸກຢ່າງ” ເມື່ອຊາຍສອງຄົນອອກໄປແລ້ວ ນາງກໍ
ເອົາເຊືອກສີແດງເຂັ້ມຜູກໄວ້ທີ່ປ່ອງຢ້ຽມ. 22ຫລັງຈາກນັ້ນ ຊາຍທັງສອງກໍຂຶ້ນໄປລີ້ຢູ່ເທິງພູເປັນ
ເວລາສາມມື້ ສ່ວນພວກທີ່ອອກຕິດຕາມກໍຊອກຫາທົ່ວທຸກບ່ອນ ແຕ່ບໍ່ພົບຈຶ່ງພາກັນກັບຄືນເມືອ.
23ເມື່ອນັ້ນ ສອດແນມທັງສອງຄົນກໍພາກັນລົງມາຈາກພູ ຂ້າມແມ່ນ້ຳແລ້ວມຸ່ງໜ້າໄປຫາໂຢຊວຍ
ແລະເລົ່າເຫດການທີ່ເກີດຂຶ້ນ ສູ່ເພິ່ນຟັງ. 24ພວກເຂົາເວົ້າວ່າ, “ພວກຂ້ານ້ອຍແນ່ໃຈວ່າ ພຣະ-
ຜູ້ເປັນເຈົ້າຊົງປະທານແຜ່ນດິນນັ້ນໃຫ້ແກ່ພວກເຮົາ ເພາະວ່າປະຊາຊົນທຸກຄົນໃນເມືອງນັ້ນພາ-
ກັນເກີດຄວາມວຸ້ນວາຍໃຈຍ້ອນພວກເຮົາ.”

# ບົດທີ 3

## ພວກອິສຣາເອນຂ້າມແມ່ນ້ຳຢໍແດນ

1ມື້ໃໝ່ຕໍ່ມາ ໂຢຊວຍກໍຕື່ນແຕ່ເຊົ້າ ພາພວກອິສຣາເອນທຸກຄົນອອກຈາກຄ້າຍພັກທີ່ຊິດຕິມ
ມຸ່ງໜ້າສູ່ແມ່ນ້ຳຢໍແດນ ພວກເຂົາຢຸດພັກຢູ່ທີ່ນັ້ນກ່ອນຈະຂ້າມແມ່ນ້ຳໄປ. 2ຄັນເວລາລ່ວງມາໄດ້
ສາມມື້ແລ້ວ ພວກຫົວໜ້າກໍຍ່າງເລາະໄປມາໃນຄ້າຍພັກນັ້ນ. 3ແລະສັ່ງຕໍ່ປະຊາຊົນວ່າ, “ເວລາ
ພວກເຈົ້າເຫັນພວກປະໂລຫິດ ຫາມຫີບຄຳສັນຍາຂອງພຣະຜູ້ເປັນເຈົ້າຂອງພວກເຈົ້າອອກໄປ
ຈົ່ງອອກຕິດຕາມໂລດ. 4ເພື່ອໃຫ້ຮູ້ຈັກທົນທາງທີ່ຈະໄປ ເພາະວ່າພວກເຈົ້າຍັງບໍ່ເຄີຍຜ່ານທາງ
ເສັ້ນນັ້ນຈັກເທື່ອ ແຕ່ວ່າ ຢ່າຫຍັບເຂົ້າໄປໃກ້ຫີບນັ້ນ ຈົ່ງຍ່າງໃຫ້ມີໄລຍະໄກຈາກຫີບຄຳສັນຍາ
ປະມານສອງພັນສອກ.”

5ແລ້ວ ໂຢຊວຍ ກໍບອກປະຊາຊົນວ່າ, “ຈົ່ງຮັກສາຕົນໃຫ້ບໍລິສຸດຕໍ່ ພຣະຜູ້ເປັນເຈົ້າ ເພາະວ່າມື້-
ອື່ນພຣະອົງຈະຊົງ ເຮັດການອັດສະຈັນທ່າມກາງພວກ ເຈົ້າ.” 6ແລ້ວ ໂຢຊວຍ ໄດ້ບອກພວກປະ-
ໂລຫິດຫາມຫີບຄໍາສັນຍາອອກໜ້າໄປກ່ອນຄົນທັງຫລາຍ ພວກເຂົາກໍປະຕິບັດຕາມ.

7ຕໍ່ມາ ພຣະຜູ້ເປັນເຈົ້າ ຊົງບອກ ໂຢຊວຍ ວ່າ, “ມື້ນີ້ ເຮົາຈະບອກ ອິສຣາເອນ ທຸກຄົນໃຫ້ກຽດ
ແກ່ເຈົ້າເປັນຜູ້ຍິ່ງໃຫຍ່ ແລ້ວພວກເຂົາຈະໄດ້ຮູ້ວ່າ ເຮົາໄດ້ສະຖິດຢູ່ນໍາເຈົ້າ. 8ເໝືອນດັ່ງໄດ້ສະ-
ຖິດຢູ່ນໍາ ໂມເຊ ດັ່ງນັ້ນ ເຈົ້າຈົ່ງສັ່ງພວກປະໂລຫິດທີ່ຫາມຫີບຄໍາສັນຍານັ້ນວ່າ ເມື່ອໄປຮອດແມ່-
ນໍ້າຢໍແດນ ແລ້ວ ໃຫ້ຢຸດຢູ່ແຄມນໍ້າໃກ້ໆ ກັບຕາຝັ່ງເສຍກ່ອນ.”

9ແລ້ວ ໂຢຊວຍ ກໍສັ່ງປະຊາຊົນວ່າ, “ຈົ່ງພາກັນຫຍັບເຂົ້າມາໃກ້ໆ ພີ້ເພື່ອຟັງຄໍາທີ່ ພຣະຜູ້ເປັນ-
ເຈົ້າ ຂອງພວກເຈົ້າຊົງສັ່ງໄວ້. 10ມື້ນີ້ພວກເຈົ້າຈະຮູ້ຈັກວ່າ ພຣະຜູ້ເປັນເຈົ້າ ຊົງມີຊີວິດຢູ່ ແລະຊົງ
ສະຖິດຢູ່ໃນທ່າມກາງພວກເຈົ້າ ເພາະພຣະອົງຈະຊົງຂັບໄລ່ຊາວ ການາອານ ຮິດຕີ ຮີວີ ເປຣີຊີ
ກີກາຊີ ອະໂມຣິດ ແລະຊາວ ເຢບຸດ ໃຫ້ໜີອອກໄປຕໍ່ໜ້າພວກເຈົ້າ. 11ສ່ວນຫີບຄໍາສັນຍາແຫ່ງ
ພຣະຜູ້ເປັນເຈົ້າ ຈະຂ້າມແມ່ນໍ້າ ຢໍແດນ ໄປກ່ອນພວກເຈົ້າ. 12ດັ່ງນັ້ນ ຈົ່ງຄັດເລືອກເອົາສິບຄົນ
ຈາກຕະກູນ ອິສຣາເອນ ແຕ່ລະຕະກູນໃຫ້ໄດ້ຜູ້ໜຶ່ງ. 13ເມື່ອເວລາພວກປະໂລຫິດຫາມຫີບຄໍາ
ສັນຍາຂອງ ພຣະຜູ້ເປັນເຈົ້າ ຍ່າງໄປຢຽບນໍ້າ ແມ່ນໍ້າ ຢໍແດນ ຈະແຍກອອກຈາກກັນ ແລະນໍ້າທີ່
ໄຫລມາແຕ່ທາງເໜືອຈະຢຸດໂຮມຢູ່ບ່ອນດຽວ.”

14ເວລານັ້ນເປັນເວລາເກັບກ່ຽວ ນໍ້າໄດ້ຂຶ້ນເຕັມຕາຝັ່ງ ດັ່ງນັ້ນ ພວກປະຊາຊົນຈຶ່ງມຸ່ງໜ້າ
ອອກຈາກຄ້າຍພັກໄປຂ້າມແມ່ນໍ້າ ຢໍແດນ ສ່ວນປະໂລຫິດກໍຫາມຫີບຄໍາສັນຍາອອກໄປກ່ອນ.
15ພໍຮອດແມ່ນໍ້າ ຢໍແດນ ພວກປະໂລຫິດກໍລົງຢຽບນໍ້າ. 16ທັນໃດນັ້ນ ນໍ້າກໍໂຮມເຂົ້າກັນ ແລະຢຸດ
ໄຫລໄກຈາກພວກເຂົາທີ່ເມືອງ ອາດາມ ໃກ້ໆ ກັບເມືອງ ຊາເຣທານ ນໍ້ານັ້ນກໍບໍ່ໄຫລລົງສູ່ທະ-
ເລຕາຍອີກ ຝ່າຍປະຊາຊົນກໍຂ້າມໄປໃກ້ໆ ເມືອງ ເຢຣີໂກ. 17ໃນຂະນະທີ່ພວກເຂົາຂ້າມໄປຢູ່
ເທິງດິນ ແຫ້ງນັ້ນ ພວກປະໂລຫິດທີ່ຫາມຫີບຄໍາສັນຍາຂອງ ພຣະຜູ້ເປັນເຈົ້າ ກໍຢືນຢູ່ເທິງດິນ
ແຫ້ງກາງນໍ້າ ຢໍແດນ ຈົນພວກປະຊາຊົນທຸກຄົນຂ້າມໄປຫວິດໝົດ.

# ບົດທີ 4

## ຫີນສິບສອງກ້ອນໝາຍເຖິງຫຍັງ?

1ຫລັງ ຈາກປະຊາຊົນຂ້າມແມ່ນໍ້າ ຢໍແດນ ໄປ ແລ້ວ ພຣະຜູ້ເປັນເຈົ້າ ກໍຊົງກ່າວຕໍ່ ໂຢຊວຍ ວ່າ,
2“ຈົ່ງ ເລືອກ ເອົາສິບສອງຄົນ ຈາກ ແຕ່ລະຕະກູນ ອິສຣາເອນ. 3ແລ້ວສັ່ງ ໃຫ້ພວກ ເຂົາຍົກ ເອົາຫີນ
ສິບສອງກ້ອນຈາກກາງ ແມ່ນໍ້າ ໃນບ່ອນທີ່ພວກປະໂລຫິດໄດ້ຢືນຢູ່ ແລະຂົນໄປວາງໄວ້ໃນບ່ອນ
ທີ່ຈະຕັ້ງຄ້າຍພັກຄືນນີ້.”

4-5ດັ່ງນັ້ນ ໂຢຊວຍ ຈຶ່ງ ເອີ້ນ ເອົາສິບສອງຄົນທີ່ ເລືອກ ໄວ້ນັ້ນມາ ແລະ ເວົ້າກັບພວກ ເຂົາວ່າ,
“ຈົ່ງ ໄປໃນແມ່ນໍ້າ ຢໍແດນ ທາງດ້ານໜ້າຫີບຄໍາສັນຍາຂອງ ພຣະຜູ້ເປັນເຈົ້າ ຂອງພວກເຈົ້າ ແຕ່-
ລະຄົນ ຈົ່ງ ແຍກ ເອົາຫີນກ້ອນໜຶ່ງ ມາສໍາລັບຕະກູນຂອງຕົນ. 6ກ້ອນຫີນ ເຫລົ່ານັ້ນ ເປັນສິ່ງ ເຕືອນ
ໃຫ້ປະຊາຊົນຈື່ຈໍາວ່າ ພຣະຜູ້ເປັນເຈົ້າ ຊົງຊ່ອຍ ເຫລືອພວກ ເຂົາຢ່າງໃດ ຖ້າວ່າ ພາຍຂ້າງໜ້າ

ລູກຫລານຂອງພວກເຈົ້າ ຈະຖາມເຖິງຄວາມໝາຍຂອງກ້ອນຫີນເຫລົ່ານັ້ນ ພວກເຈົ້າຈະບອກ
ພວກເຂົາໄດ້ວ່າ, 7ກ້ອນຫີນເຫລົ່ານັ້ນເປັນສິ່ງທີ່ເຕືອນໃຫ້ປະຊາຊົນ ອິສຣາເອນ ຈື່ຈຳຕະຫລອດ
ໄປວ່າ ແມ່ນໍ້າຢໍແດນ ຢຸດໄຫລ ເມື່ອເວລາຫາມຫີບຄຳສັນຍາຂອງ ພຣະຜູ້ເປັນເຈົ້າ ຂ້າມແມ່ນໍ້າ
ມາ.”

8ຕໍ່ມາ ພວກນັ້ນກໍເຮັດຕາມຄຳສັ່ງຂອງ ໂຢຊວຍ ຕາມທີ່ ພຣະຜູ້ເປັນເຈົ້າ ໄດ້ບອກແກ່ເພິ່ນ
ພວກເຂົາແຍກເອົາກ້ອນຫີນສິບສອງກ້ອນອອກຈາກກາງແມ່ນນໍ້າຢໍແດນຕາມຈຳນວນຕະກູນອິ-
ສຣາເອນ ເພື່ອເອົາໄປວາງໄວ້ໃນບ່ອນຕັ້ງຄ້າຍພັກເຊົາ. 9ຕໍ່ມາ ໂຢຊວຍຕັ້ງຫີນອີກສິບສອງ
ກ້ອນໄວ້ກາງແມ່ນໍ້າຢໍແດນ ໃນບອນທີ່ພວກປະໂລຫິດຫາມຫີບຄຳສັນຍາຢືນຢູ່ນັ້ນ ຫີນນັ້ນຍັງມີ
ຢູ່ຈົນເທົ່າທຸກມື້ນີ້.

10ສ່ວນພວກປະໂລຫິດກໍຢືນຢູ່ກາງແມ່ນໍ້າຢໍແດນ ຈົນຄຳສັ່ງທີ່ ພຣະຜູ້ເປັນເຈົ້າ ຊົງສັ່ງໄວ້ກັບ
ໂຢຊວຍສຳເລັດລົງ ຕາມທີ່ໂມເຊໄດ້ສັ່ງໄວ້. 11ປະຊາຊົນກໍຟ້າວຂ້າມໄປ ເມື່ອທຸກໆ ຄົນຂ້າມ
ໄປໝົດແລ້ວ ພວກປະໂລຫິດພ້ອມດ້ວຍຫີບຄຳສັນຍາຂອງພຣະຜູ້ເປັນເຈົ້າ ກໍຂຶ້ນຈາກແມ່ນໍ້າ
ແລະອອກໄປກ່ອນໜ້າພວກເຂົາ. 12ສ່ວນຕະກູນຣູເບັນ ຄາດ ແລະເຄິ່ງໜຶ່ງຈາກຕະກູນມາ-
ນາເຊ ກໍຂ້າມແມ່ນໍ້າໄປກ່ອນໝູ່ຕາມຄຳສັ່ງຂອງໂຢຊວຍ. 13ຄົນທັງໝົດນີ້ມີປະມານສີ່ສິບພັນຄົນ
ຊຶ່ງຕຽມພ້ອມໃນການຮົບເສິກ ໄດ້ຂ້າມໄປສູ່ທົ່ງພຽງໃກ້ເມືອງ ເຢຣິໂກ ແລະ ພຣະຜູ້ເປັນເຈົ້າຊົງ
ທອດພຣະເນດເບິ່ງພວກເຂົາຢູ່. 14ໃນມື້ນັ້ນ ພຣະຜູ້ເປັນເຈົ້າຊົງເຮັດໃຫ້ພວກ ອິສຣາເອນ ໃຫ້
ກຽດແກ່ໂຢຊວຍເປັນຜູ້ຍິ່ງໃຫຍ່ ເພື່ອພວກເຂົາຈະຢຳເກງຕະຫລອດຊົ່ວຊີວິດຂອງເພິ່ນ ເໝືອນ
ດັ່ງທີ່ໄດ້ຢ້ານຢຳເກງໂມເຊນັ້ນ.

15-17ສ່ວນ ພຣະຜູ້ເປັນເຈົ້າຊົງບອກໂຢຊວຍວ່າ, “ຈົ່ງບອກປະໂລຫິດທີ່ຫາມຫີບຄຳສັນຍານັ້ນ
ຂຶ້ນມາຈາກກາງແມ່ນໍ້າຢໍແດນ” ໂຢຊວຍກໍປະຕິບັດຕາມ. 18ເມື່ອພວກປະໂລຫິດຂຶ້ນມາຮອດດິນ
ແຫ້ງແລ້ງ ແມ່ນໍ້າກໍໄຫລເຂົ້າໃສ່ກັນເຕັມຕາຝັ່ງຄືເກົ່າອີກ.

19ໃນມື້ທີ່ປະຊາຊົນຂ້າມແມ່ນໍ້ານັ້ນ ເປັນມື້ທີສິບຂອງເດືອນທີໜຶ່ງ ແລະພວກເຂົາພາກັນຢຸດ
ພັກຢູ່ທີ່ ກິນການ ທາງທິດຕາເວັນອອກຂອງເມືອງ ເຢຣິໂກ. 20ສ່ວນໂຢຊວຍກໍເອົາຫີນສິບສອງ
ກ້ອນທີ່ເອົາຂຶ້ນມາຈາກແມ່ນໍ້າຢໍແດນຕັ້ງໄວ້ຢູ່ທີ່ນັ້ນ. 21ແລະເພິ່ນໄດ້ເວົ້າຕໍ່ພວກອິສຣາເອນວ່າ,
“ໃນອະນາຄົດຂ້າງໜ້າ ຖ້າລູກຖາມພໍ່ວ່າ ຫີນນັ້ນໝາຍເຖິງຫຍັງ? 22ພວກເຈົ້າຈົ່ງບອກລູກວ່າ
ໝາຍເຖິງເວລາທີ່ພວກອິສຣາເອນໄດ້ຂ້າມແມ່ນໍ້າຢໍແດນ ເທິງດິນແຫ້ງ. 23ດ້ວຍວ່າ ພຣະຜູ້-
ເປັນເຈົ້າຂອງພວກເຈົ້າໄດ້ໃຫ້ແມ່ນໍ້າຢໍແດນ ແຫ້ງລົງ ຈົນທຸກໆ ຄົນຂ້າມໄປໄດ້ເໝືອນດັ່ງທີ່
ພຣະອົງຊົງບັນດານ ໃຫ້ນໍ້າທະເລແດງແຫ້ງລົງ ເພື່ອໃຫ້ພວກເຮົາຂ້າມມາໄດ້. 24ຍ້ອນເລື່ອງນີ້
ທຸກໆ ຄົນໃນໂລກຈະຮູ້ຈັກອຳນາດຂອງພຣະຜູ້ເປັນເຈົ້າ ແລະພວກເຈົ້າຈະຢ້ານຢຳເກງພຣະ-
ຜູ້ເປັນເຈົ້າຂອງພວກເຈົ້າຕະຫລອດໄປ.”

# ບົດທີ 5

## ການຮັບພິທີຕັດ ແລະງານສະຫລອງປັດສະຄາທີ່ກິນການ

1ເມື່ອໄດ້ຍິນຂ່າວວ່າ ພຣະຜູ້ເປັນເຈົ້າຊົງໃຫ້ແມ່ນ້ຳຢໍແດນ ແຫ້ງລົງເພື່ອຊົງໂຜດໃຫ້ຄົນອິ-
ສຣາເອນຂ້າມໄປ ເຈົ້າຊີວິດຊາວອະໂມຣິດທີ່ຢູ່ທາງທິດຕາເວັນຕົກຂອງແມ່ນ້ຳຢໍແດນ ແລະ
ບັນດາເຈົ້າຊີວິດການາອານທີ່ຢູ່ໃກ້ທະເລ ຈຶ່ງເກີດມີຄວາມຢ້ານກົວ ແລະເສຍຂວັນຍ້ອນພວກ
ອິສຣາເອນ.

2ໃນຄາວນັ້ນ ພຣະຜູ້ເປັນເຈົ້າຊົງບອກໂຢຊວຍວ່າ, "ໃຫ້ລົງມືເຮັດມີດຫີນ ເພື່ອໃຫ້ຄົນອິ-
ສຣາເອນຮັບພິທີຕັດອີກ." 3ດັ່ງນັ້ນ ໂຢຊວຍຈຶ່ງເຮັດມີດຫີນ ເພື່ອໃຫ້ພວກອິສຣາເອນຮັບພິທີ
ຕັດທີ່ພູໜັງຫຸ້ມປາຍໂຄ້ຍ. 4ການທີ່ເພິ່ນໄດ້ເຮັດດັ່ງນັ້ນ ກໍເພາະວ່າຈຳນວນຜູ້ຊາຍທີ່ເປັນທະຫານ
ໄດ້ເວລາອອກຈາກປະເທດເອຢິບມາ ພວກເຂົາໄດ້ຕາຍໝົດໃນຖິ່ນແຫ້ງແລ້ງກັນດານ. 5ພວກ
ນັ້ນແມ່ນພວກທີ່ຮັບພິທີຕັດແລ້ວ ແຕ່ຜູ້ທີ່ເກີດໃນຖິ່ນແຫ້ງແລ້ງກັນດານຍັງບໍ່ໄດ້ຮັບພິທີຕັດຈັກ
ຄົນ. 6ໃນເວລາທີ່ພວກອິສຣາເອນທ່ຽວໄປມາໃນຖິ່ນແຫ້ງແລ້ງກັນດານລະຫວ່າງສີ່ສິບປີນັ້ນ
ເພາະພວກເຂົາບໍ່ຍອມຟັງຄວາມພຣະຜູ້ເປັນເຈົ້າ ພຣະອົງຊົງສັນຍາກັບພວກເຂົາວ່າ, "ພວກ
ເຈົ້າຈະບໍ່ເຫັນແຜ່ນດິນອັນອຸດົມສົມບູນ ທີ່ເຮົາໄດ້ສັນຍາໄວ້ກັບປູ່ຍ່າຕາຍາຍວ່າຈະໃຫ້ແກ່ພວກ
ເຈົ້າ." 7ສ່ວນລູກຊາຍທັງຫລາຍຂອງພວກເຂົາຊຶ່ງຈະເປັນຜູ້ແທນພວກເຂົານັ້ນ ໂຢຊວຍ ໄດ້
ເຮັດພິທີຕັດໃຫ້ ເພາະພວກເຂົາຍັງບໍ່ທັນໄດ້ຮັບມາກ່ອນ ໃນເວລາເດີນທາງຢູ່ຖິ່ນແຫ້ງແລ້ງກັນ-
ດານ. 8ຫລັງຈາກຮັບພິທີຕັດແລ້ວ ຊົນຊາດທັງໝົດກໍພາກັນພັກເຊົາຢູ່ຈົນບາດແຜຫາຍເຈັບ. 9ຕໍ່
ມາ ພຣະຜູ້ເປັນເຈົ້າໄດ້ຊົງບອກໂຢຊວຍວ່າ, "ມື້ນີ້ເຮົາໄດ້ໃຫ້ພວກເຈົ້າພົ້ນຈາກຄວາມໝິ່ນປະ-
ໝາດໃນການເປັນທາດທີ່ປະເທດເອຢິບ" ດັ່ງນັ້ນ ພວກເຂົາຈຶ່ງເອີ້ນບ່ອນນັ້ນວ່າ ກິນການ ເທົ່າ
ທຸກມື້ນີ້.

10ໃນເວລາທີ່ພວກອິສຣາເອນພັກເຊົາຢູ່ກິນການຕາມທົ່ງພຽງຂອງເມືອງເຢຣິໂກ ພວກເຂົາ
ໄດ້ສະຫລອງປັດສະຄາໃນຕອນຄ່ຳມື້ວັນທີສິບສີ່ຂອງເດືອນນັ້ນ. 11ຫລັງຈາກປັດສະຄາແລ້ວ
ພວກເຂົາໄດ້ກິນແຕ່ສິ່ງທີ່ຊາວການາອານປູກໄວ້ ຄືເຂົ້າຂົ້ວ ແລະເຂົ້າຈີ່ບໍ່ມີເຊື້ອ. 12ຕັ້ງແຕ່ມື້ນັ້ນ
ມາ ພວກອິສຣາເອນກໍບໍ່ມີມານາອີກ ໃນປີນັ້ນ ພວກເຂົາກິນແຕ່ສິ່ງທີ່ຊາວການາອານປູກໄວ້.

## ໂຢຊວຍພົບຊາຍຖືດາບ

13ເວລາໂຢຊວຍໄປໃກ້ຈະຮອດເມືອງເຢຣິໂກ ໃນທັນໃດນັ້ນ ເພິ່ນໄດ້ເຫັນຊາຍຜູ້ໜຶ່ງຖືດາບ
ຢືນຢູ່ຕໍ່ໜ້າເພິ່ນ ໂຢຊວຍຈຶ່ງຫຍັບເຂົ້າໄປໃກ້ ແລະຖາມວ່າ, "ທ່ານເປັນທະຫານຝ່າຍເຮົາ ຫລື
ຝ່າຍສັດຕູ?" 14ຊາຍຜູ້ນັ້ນຕອບວ່າ, "ເຮົາບໍ່ເປັນທະຫານຝ່າຍໃດ ເຮົາມານີ້ໃນຖານະເປັນຜູ້ບັນ-
ຊາການກອງທັບຂອງພຣະຜູ້ເປັນເຈົ້າ" ໂຢຊວຍຈຶ່ງໝູບໜ້າລົງຂາບໄຫວ້ ແລະທູນຖາມວ່າ,
"ຂ້ານ້ອຍເປັນຜູ້ຮັບໃຊ້ຂອງພຣະອົງ ພຣະອົງຢາກຈະໃຫ້ຂ້ານ້ອຍເຮັດຫຍັງ?" 15ຜູ້ບັນຊາການ
ກອງທັບຂອງພຣະຜູ້ເປັນເຈົ້າກ່າວແກ່ໂຢຊວຍວ່າ, "ຈົ່ງຖອດເກີບຂອງເຈົ້າອອກ ເພາະບ່ອນທີ່
ເຈົ້າຢືນຢູ່ນັ້ນເປັນບ່ອນສັກສິດ" ແລ້ວໂຢຊວຍກໍເຮັດຕາມຄຳສັ່ງ.

# ບົດທີ 6

## ການພັງທະລາຍຂອງເມືອງເຢຣິໂກ

[1]ຍ້ອນຊາວອິສຣາເອນໃກ້ເມືອງເຢຣິໂກ ປະຕູເມືອງກໍອັດໄວ້ຢ່າງແໜ້ນໜາ ໂດຍບໍ່ມີໃຜເຂົ້າ
ອອກໄດ້. [2]ພຣະຜູ້ເປັນເຈົ້າຈຶ່ງຊົງບອກໂຢຊວຍວ່າ, "ຈົ່ງຟັງ ເຮົາຈະມອບເມືອງເຢຣິໂກ ແລະ
ເຈົ້າຊີວິດໃນເມືອງນີ້ ພ້ອມທັງທະຫານຜູ້ກ້າຫານໄວ້ໃນກຳມືຂອງເຈົ້າ. [3]ເຈົ້າພ້ອມບັນດາທະ-
ຫານຂອງເຈົ້າ ຈົ່ງພາກັນຍ່າງອ້ອມເມືອງນີ້ມື້ລະເທື່ອພາຍໃນຫົກມື້. [4]ໃຫ້ພວກປະໂລຫິດເຈັດຄົນ
ຖືແກອອກໄປກ່ອນຫີບຄຳສັນຍາ ແລ້ວໃນມື້ທີເຈັດ ພວກເຈົ້າຈົ່ງຍ່າງອ້ອມເຈັດຮອບ ໂດຍມີ
ພວກປະໂລຫິດເປົ່າແກນຳໜ້າ. [5]ເມື່ອໄດ້ຍິນສຽງແກດັງຂຶ້ນເປັນສຽງຍາວໆ ທຸກຄົນຈົ່ງພາກັນ
ຮ້ອງດ້ວຍສຽງດັງ ແລ້ວກຳແພງເມືອງຈະເຈື່ອນລົງ ເມື່ອນັ້ນໃຫ້ທຸກຄົນເຂົ້າໄປໃນເມືອງທັນທີ."

[6]ດັ່ງນັ້ນ ໂຢຊວຍຈຶ່ງເອີ້ນພວກປະໂລຫິດມາແລ້ວບອກວ່າ, "ຈົ່ງຫາມຫີບຄຳສັນຍາໄປ ສ່ວນ
ປະໂລຫິດອີກເຈັດຄົນ ໃຫ້ຖືແກນຳໜ້າຫີບຄຳສັນຍາໄປ." [7]ແລ້ວໂຢຊວຍໄດ້ບອກປະຊາຊົນວ່າ,
"ຈົ່ງຍ່າງອ້ອມເມືອງ ແລະໃຫ້ພວກທະຫານຍ່າງອອກໜ້າຫີບຄຳສັນຍາຂອງພຣະຜູ້ເປັນເຈົ້າ."

[8]ເມື່ອໂຢຊວຍສັ່ງແລ້ວ ປະໂລຫິດເຈັດຄົນກໍເປົ່າແກຍ່າງນຳໜ້າຫີບຄຳສັນຍາຂອງພຣະຜູ້-
ເປັນເຈົ້າ. [9]ສ່ວນທະຫານກອງໜ້າ ກໍຍ່າງອອກໄປກ່ອນພວກປະໂລຫິດທີ່ເປົ່າແກ ແລະພວກ
ກອງຫລັງກໍຍ່າງຕາມຫີບຄຳສັນຍາໄປ ສຽງແກດັງຢູ່ຕະຫລອດເວລາ. [10]ແຕ່ໂຢຊວຍໄດ້ບອກ
ພວກປະຊາຊົນວ່າ ບໍ່ໃຫ້ໂຮຮ້ອງຫລືໃຊ້ສຽງຈົນກວ່າຈະມີຄຳສັ່ງໃໝ່. [11]ດັ່ງນັ້ນ ເພິ່ນໄດ້ສັ່ງໃຫ້
ປະໂລຫິດຫາມຫີບຄຳສັນຍາຂອງພຣະຜູ້ເປັນເຈົ້າຍ່າງອ້ອມເມືອງໜຶ່ງຮອບ ແລ້ວຈຶ່ງພາກັນກັບ
ໄປຄ້າຍພັກ ເພື່ອພັກຜ່ອນໃນເວລາກາງຄືນ.

[12]ເຊົ້າມື້ໃໝ່ມາ ໂຢຊວຍລຸກແຕ່ເດິກ ສ່ວນພວກປະໂລຫິດກໍຫາມຫີບຄຳສັນຍາອອກໄປ.
[13]ເມື່ອພວມຍ່າງໄປນັ້ນ ປະໂລຫິດເຈັດຄົນກໍເປົ່າແກອອກໜ້າກ່ອນ ສ່ວນທະຫານກອງໜ້າກໍ
ຍ່າງອອກກ່ອນ ແລະກອງຫລັງກໍຍ່າງຕາມໄປພ້ອມທັງສຽງແກຢູ່ຕະຫລອດເວລາ. [14]ໃນມື້ທີ
ສອງ ພວກເຂົາຍ່າງອ້ອມເມືອງອີກຮອບໜຶ່ງ ແລ້ວກໍຫລົບຄືນເມືອຄ້າຍພັກ ພວກເຂົາພາກັນ
ເຮັດຢູ່ດັ່ງນີ້ຕະຫລອດທັງຫົກມື້.

[15]ສ່ວນມື້ທີເຈັດ ພວກເຂົາໄດ້ລຸກແຕ່ເດິກ ແລະຍ່າງອ້ອມເມືອງເຖິງເຈັດຮອບໃນມື້ດຽວກັນ
ນັ້ນ ມີແຕ່ມື້ດຽວເທົ່ານັ້ນທີ່ພວກເຂົາໄດ້ຍ່າງອ້ອມເມືອງເຈັດຮອບ. [16]ພໍຮອດຮອບທີເຈັດ ໃນຂະ-
ນະທີ່ພວກປະໂລຫິດກຳລັງເປົ່າແກຢູ່ ໂຢຊວຍຮ້ອງບອກແກ່ປະຊາຊົນວ່າ, "ຈົ່ງຮ້ອງໂຮຂຶ້ນ
ເພາະວ່າພຣະຜູ້ເປັນເຈົ້າໄດ້ຊົງປະທານເມືອງນີ້ໃຫ້ແກ່ພວກເຈົ້າແລ້ວ. [17]ເພື່ອເປັນການຖວາຍ
ແກ່ພຣະຜູ້ເປັນເຈົ້າ ເວັ້ນໄວ້ແຕ່ນາງຣາຮາບຍິງໂສເພນີ ພ້ອມທັງທຸກຄົນທີ່ຢູ່ພາຍໃນເຮືອນ
ຂອງນາງ ໃຫ້ມີຊີວິດຢູ່ໄດ້ ເພາະວ່ານາງໄດ້ເຊື່ອງຜູ້ສອດແນມສອງຄົນຂອງເຮົາໄວ້. [18]ແຕ່ຕ້ອງ
ລະວັງຢ່າຈັບເອົາສິ່ງທີ່ພຣະເຈົ້າຊົງສັ່ງໃຫ້ທຳລາຍ ຖ້າພວກເຈົ້າເອົາສິ່ງເຫລົ່ານັ້ນ ພວກເຈົ້າຈະ
ນຳຄວາມເດືອດຮ້ອນ ແລະຄວາມຈິບຫາຍມາສູ່ຄ້າຍອິສຣາເອນ. [19]ສ່ວນເງິນຄຳ ແລະເຄື່ອງ-
ໃຊ້ທີ່ເປັນທອງເຫລືອງ ຫລືເຫລັກ ຕ້ອງເປັນສິ່ງທີ່ຖວາຍແກ່ພຣະຜູ້ເປັນເຈົ້າ ແລະຕ້ອງເກັບໄວ້
ໃນຫໍພະຄັງຂອງພຣະອົງ."

[20]ແລ້ວພວກປະໂລຫິດກໍເປົ່າແກຂຶ້ນ ເມື່ອປະຊາຊົນໄດ້ຍິນສຽງແກ ພວກເຂົາກໍຮ້ອງໂຮດ້ວຍ
ສຽງດັງ ແລະກຳແພງເມືອງນັ້ນກໍເຈື່ອນລົງ ທຸກໆ ຄົນເຂົ້າໄປໃນເມືອງແລະຍຶດເອົາທັນທີ.
[21]ພວກເຂົາໃຊ້ດາບຂ້າທັງຊາຍຍິງ ເດັກນ້ອຍ ຜູ້ເຖົ້າ ຕະຫລອດທັງງົວຄວາຍ ແກະ ແລະລໍ.
[22]ແລ້ວໂຢຊວຍໄດ້ບອກຊາຍສອງຄົນເປັນຜູ້ສອດແນມວ່າ, "ໃຫ້ພວກເຈົ້າເຂົ້າໄປໃນເຮືອນຂອງ
ຍິງໂສເພນີເພື່ອນຳເອົາຕົວນາງ ພ້ອມທັງທຸກຄົນໃນເຮືອນຂອງນາງອອກມາຕາມທີ່ໄດ້ສັນຍາ
ໄວ້." [23]ດັ່ງນັ້ນ ຊາຍທັງສອງຈຶ່ງເຂົ້າໄປໃນເຮືອນ ພາເອົານາງຣາຮາບພ້ອມດ້ວຍພໍ່ແມ່ອ້າຍ
ນ້ອງ ແລະພວກອື່ນໆ ທີ່ຢູ່ໃນເຮືອນຂອງນາງອອກມາ ພາໄປອາໄສຢູ່ທາງນອກຄ້າຍພັກຂອງ
ພວກອິສຣາເອນ. [24]ແລ້ວພວກອິສຣາເອນກໍຈູດໄຟເຜົາເມືອງ ແລະທຸກໆ ສິ່ງທີ່ຢູ່ໃນເມືອງນັ້ນ
ເວັ້ນໄວ້ແຕ່ເງິນຄຳ ແລະເຄື່ອງໃຊ້ເປັນທອງເຫລືອງ ຫລືເຫລັກທີ່ພວກເຂົາເອົາໄວ້ໃນທຳພະຄັງ
ຂອງພຣະຜູ້ເປັນເຈົ້າ. [25]ຍ້ອນນາງຣາຮາບໄດ້ເຊື່ອງຜູ້ສອດແນມທັງສອງຄົນທີ່ໃຊ້ໄປຈອບເບິ່ງ
ເມືອງ ເຢຣິໂກ ໂຢຊວຍຈຶ່ງໄດ້ຊ່ອຍຊີວິດຂອງນາງ ພ້ອມທັງພໍ່ແມ່ອ້າຍນ້ອງ ເຊື້ອສາຍຂອງ
ນາງຣາຮາບກໍຢູ່ກັບອິສຣາເອນຈົນເທົ່າທຸກມື້ນີ້. [26]ຕໍ່ມາ ໂຢຊວຍໄດ້ເຕືອນຢ່າງໜັກແໜ້ນວ່າ,
"ຖ້າຜູ້ໜຶ່ງຜູ້ໃດຈະສ້າງເມືອງເຢຣິໂກນີ້ຂຶ້ນໃໝ່ ຈົ່ງໃຫ້ຄວາມສາບແຊ່ງຂອງພຣະຜູ້ເປັນເຈົ້າຕົກ
ຖືກຜູ້ນັ້ນ. "ໃຜກໍຕາມທີ່ລົງມືສ້າງເມືອງນີ້ ຈະຕ້ອງເສຍລູກຊາຍກົກຂອງຕົນ ແລະຜູ້ທີ່ຈະສ້າງ
ປະຕູເມືອງນີ້ ຈະເສຍລູກຊາຍຫລ້າຂອງຕົນ." [27]ດັ່ງນັ້ນ ພຣະຜູ້ເປັນເຈົ້າຈຶ່ງຊົງສະຖິດຢູ່ກັບ
ໂຢຊວຍ ແລະຊື່ສຽງຂອງເພິ່ນໄດ້ຊ່າລືໄປທົ່ວທັງປະເທດນັ້ນ.

# ບົດທີ 7

## ອາຄານເຮັດບາບ

[1]ລູກຫລານອິສຣາເອນໄດ້ເຮັດບາບ ດ້ວຍການຂາບໄຫວ້ຮູບເຄົາລົບ ຄື: ອາຄານ ລູກການມີ
ລູກຊັບດີ ລູກເຊຣາໃນ ຕະກຸນຢູດາໄດ້ເກັບຮັກສາຮູບເຄົາລົບໄວ້ ແລະພຣະພິໂລດຂອງພຣະ-
ຜູ້ເປັນເຈົ້າກໍພຸ່ງຂຶ້ນຕໍ່ສູ້ລູກຫລານອິສຣາເອນ

[2]ໂຢຊວຍ ໄດ້ ໃຊ້ ບາງ ຄົນ ຈາກ ເມືອງ ເຢຣິໂກ ໄປ ເມືອງ ອາອີ ທີ່ຢູ່ ໃກ້ກັບ ເມືອງ ເບັດ-ອາເວນ
ທາງທິດຕາເວັນອອກຂອງເມືອງເບັດເອນ ແລະໂຢຊວຍໄດ້ບອກພວກເຂົາວ່າ "ຈົ່ງຂຶ້ນໄປເບິ່ງ
ແຜ່ນດິນນັ້ນ" ພວກເຂົາກໍຂຶ້ນໄປສອດແນມເມືອງອາອີ [3]ຫລັງຈາກນັ້ນ ພວກເຂົາໄດ້ກັບຄືນໄປ
ຫາໂຢຊວຍ ແລະບອກເພິ່ນວ່າ ບໍ່ຕ້ອງໃຫ້ປະຊາຊົນທັງໝົດຂຶ້ນໄປ ໃຫ້ສົ່ງພຽງແຕ່ສອງ ຫລື
ສາມພັນຄົນເທົ່ານັ້ນຂຶ້ນໄປ ກໍສາມາດຕີເອົາຊະນະເມືອງອາອີ ເພາະວ່າຄົນໃນເມືອງນັ້ນບໍ່ມີ
ຫລາຍ

[4]ດັ່ງນັ້ນ ຈຶ່ງມີປະຊາຊົນພຽງແຕ່ສາມພັນຄົນເທົ່ານັ້ນທີ່ຂຶ້ນໄປ ແຕ່ພວກເຂົາໄດ້ປົບໜີຈາກ
ຊາວເມືອງອາອີ [5]ຊາວເມືອງອາອີໄດ້ຂ້າພວກເຂົາຕາຍປະມານສາມສິບຫົກຄົນ ແລະໄດ້ໄລ່
ຕິດຕາມພວກເຂົາຕັ້ງແຕ່ປະຕູເມືອງໄປຈົນຮອດເຊບາຣິມ ໄດ້ຕີຊະນະພວກເຂົາ ເມື່ອລົງພູມາ,
ຈິດໃຈຂອງພວກເຂົາເກີດມີຄວາມວຸ້ນວາຍ ແລະອ່ອນເພຍໄປຄືກັບນ້ຳ

[6]ໂຢຊວຍໄດ້ຈີກເສື້ອຜ້າຂອງຕົນ ແລະກົ້ມໜ້າລົງດິນຕໍ່ໜ້າຫີບຄຳສັນຍາຂອງພຣະຜູ້ເປັນ-

ເຈົ້າຈົນຮອດຕອນແລງ, ໂຢຊວຍພ້ອມດ້ວຍພວກເຖົ້າແກ່ຊາວອິສຣາເອນໄດ້ເອົາຂີ້ຝຸ່ນມາໂຮຍ
ໃສ່ຫົວຂອງຕົນເອງ. 7ໂຢຊວຍໄດ້ຂາບທູນຕໍ່ພຣະຜູ້ເປັນເຈົ້າວ່າ "ຂ້າແດ່ພຣະຜູ້ເປັນເຈົ້າ ເຫດ
ໃດພຣະອົງໄດ້ໃຫ້ພວກນີ້ສາມາດຂ້າມແມ່ນໍ້າຢໍແດນມາໄດ້ ແລະມອບພວກຂ້ານ້ອຍໄວ້ໃນກຳມື
ຂອງພວກອະໂມຣິດ ແລະເຮັດໃຫ້ພວກຂ້ານ້ອຍຕ້ອງຈິບຫາຍໄປ ພວກຂ້ານ້ອຍພໍໃຈແລ້ວທີ່ຈະ
ຢູ່ຟາກແມ່ນໍ້າຢໍແດນເບື້ອງນັ້ນ. 8ໂອ້ ພຣະອົງເຈົ້າຂ້າ, ເມື່ອຊາວອິສຣາເອນໄດ້ຫັນຫລັງຕໍ່ໜ້າ
ພວກສັດຕູຂອງພວກເຂົາ, ຂ້ານ້ອຍຈະມີຄວາມເວົ້າແນວໃດ? 9ຊາວການາອານກັບຊົນຊາດ
ທັງຫລາຍໃນປະເທດນີ້ຈະໄດ້ຍິນຂ່າວນັ້ນ ແລະຈະມາລ້ອມພວກຂ້ານ້ອຍ, ລຶບຊື່ຂອງພວກຂ້າ-
ນ້ອຍອອກຈາກແຜ່ນດິນໂລກ ແລະພຣະອົງຈະເຮັດສິ່ງໃດສຳລັບນາມຊື່ອັນຍິ່ງໃຫຍ່ຂອງພຣະ-
ອົງ"

10ແລະພຣະຜູ້ເປັນເຈົ້າໄດ້ບອກໂຢຊວຍວ່າ "ຈົ່ງລຸກຂຶ້ນ! ເປັນຫຍັງເຈົ້າຈຶ່ງໝູບໜ້າລົງຢ່າງ
ນັ້ນ? 11ພວກອິສຣາເອນໄດ້ເຮັດບາບ ແລະໄດ້ເຮັດຜິດຕໍ່ຄຳສັ່ງຂອງເຮົາທີ່ເຮົາໄດ້ສັ່ງແກ່ພວກ
ເຂົາໄວ້ ພວກເຂົາໄດ້ລັກເກັບຮັກສາຮູບເຄົາລົບ ແລະເວົ້າຄຳຕົວະ, ພວກເຂົາໄດ້ເອົາສິ່ງຂອງ
ນັ້ນມາໃສ່ໃນທໍ່ຜ້າຂອງຕົນ. 12ແລະຊາວອິສຣາເອນຈະບໍ່ສາມາດປະເຊີນໜ້າຕໍ່ພວກສັດຕູ,
ພວກເຂົາໄດ້ປົບໜີ ຕໍ່ໜ້າພວກສັດຕູ ເພາະວ່າ ພວກເຂົາຖືກສາບແຊ່ງ ຖ້າພວກເຈົ້າບໍ່ທຳລາຍ
ສິ່ງຂອງທີ່ຖືກສາບແຊ່ງທີ່ຢູ່ທ່າມກາງພວກເຈົ້ານັ້ນ ເຮົາຈະບໍ່ສະຖິດຢູ່ກັບພວກເຈົ້າອີກຕໍ່ໄປ.
13ຈົ່ງລຸກຂຶ້ນ ຈົ່ງໃຫ້ຄົນທັງຫລາຍຊຳລະຕົວໃຫ້ບໍລິສຸດ ແລະບອກພວກເຂົາວ່າ ພວກເຈົ້າຈົ່ງ
ຊຳລະຕົວໃຫ້ບໍລິສຸດສຳລັບມື້ອື່ນ ເຫດວ່າພຣະເຈົ້າຂອງພວກອິສຣາເອນໄດ້ກ່າວຢ່າງນີ້ວ່າ
"ໂອ້ ພວກອິສຣາເອນເອີຍມີສິ່ງຂອງທີ່ຖືກສາບແຊ່ງ ໃນທ່າມກາງພວກເຈົ້າ, ພວກເຈົ້າຈະບໍ່
ສາມາດຊະນະສັດຕູຂອງພວກເຈົ້າໄດ້ ຈົນກວ່າພວກເຈົ້າຈະເອົາສິ່ງທີ່ຖືກສາບແຊ່ງນັ້ນອອກໜີ
ຈາກພວກເຈົ້າເສຍກ່ອນ. 14ໃນຕອນເຊົ້າໃຫ້ພວກເຈົ້າທຸກຄົນຈົ່ງຫຍັບເຂົ້າມາໃກ້ພຣະຜູ້ເປັນເຈົ້າ
ຕາມເຜົ່າຕ່າງໆ ແລະ ເຜົ່າທີ່ພຣະຜູ້ເປັນເຈົ້າໄດ້ຊີ້ບອກນັ້ນ ຈົ່ງຫຍັບເຂົ້າມາໃກ້ຕາມເຊື້ອສາຍ
ແລະເຊື້ອສາຍທີ່ພຣະຜູ້ເປັນເຈົ້າໄດ້ຊີ້ບອກນັ້ນ ຈົ່ງຫຍັບເຂົ້າມາໃກ້ຕາມຄອບຄົວ ແລະຄອບຄົວ
ທີ່ພຣະຜູ້ເປັນເຈົ້າຊີ້ບອກນັ້ນ ຈົ່ງຫຍັບເຂົ້າມາໃກ້ຕາມບຸກຄົນ. 15ຖ້າຄົນທີ່ຖືກຊີ້ແຈ້ງວ່າເປັນຜູ້ທີ່
ໄດ້ເກັບຮັກສາຮູບເຄົາລົບ ຜູ້ນັ້ນຈະຕ້ອງຖືກເຜົາໄຟພ້ອມກັບທຸກໆສິ່ງທີ່ລາວມີ ເພາະວ່າລາວໄດ້
ເຮັດຜິດຄືໄດ້ລ່ວງລະເມີດຕໍ່ຄຳສັ່ງຂອງພຣະຜູ້ເປັນເຈົ້າ ແລະໄດ້ເຮັດການຊົ່ວຮ້າຍໃນທ່າມກາງ
ພວກອິສຣາເອນ".

16ໂຢຊວຍໄດ້ລຸກຂຶ້ນແຕ່ເຊົ້າ ແລະໃຫ້ພວກອິສຣາເອນຫຍັບເຂົ້າມາໃກ້ຕາມເຜົ່າຕ່າງໆຂອງ
ພວກເຂົາ; ເຜົ່າຢູດາໄດ້ຖືກຊີ້ບອກ. 17ແລະໃຫ້ເຜົ່າຢູດາທັງໝົດຫຍັບເຂົ້າມາໃກ້ ແລະຕະກູນ
ເຊຣາໄດ້ຖືກຊີ້ບອກ, ເພິ່ນໄດ້ໃຫ້ຄົນທັງໝົດຈາກຕະກູນເຊຣາຫຍັບເຂົ້າມາໃກ້ ແລະຄອບຄົວ
ຊັບດີໄດ້ຖືກຊີ້ບອກ. 18ແລະເພິ່ນໄດ້ໃຫ້ຄົນທັງໝົດໃນຄອບຄົວຊັບດີຫຍັບເຂົ້າມາໃກ້ ແລະອາ-
ຄານລູກການມີ ຜູ້ເປັນລູກຂອງຊັບດີ, ລູກຂອງເຊຣາຈາກຕະກູນຢູດາຖືກຊີ້ບອກ. 19ໂຢຊວຍ
ໄດ້ບອກອາຄານວ່າ "ລູກເອີຍ ຂໍໃຫ້ເຈົ້າຈົ່ງຖວາຍພຣະສິລິແດ່ພຣະຜູ້ເປັນເຈົ້າ ພຣະເຈົ້າຂອງ
ຊາວອິສຣາເອນ ແລະຈົ່ງສັນລະເສີນພຣະອົງ ຂໍໃຫ້ເຈົ້າແຈ້ງຄວາມໃຫ້ເຮົາຟັງໃນສິ່ງທີ່ເຈົ້າໄດ້

ເຮັດນັ້ນ ຢ່າອຳໄວ້ຈາກເຮົາເລີຍ. 20ອາຄານໄດ້ຕອບໂຢຊວຍ ແລະກ່າວວ່າ "ແມ່ນແທ້, ຂ້າ-
ນ້ອຍໄດ້ເຮັດບາບຕໍ່ສູ້ພຣະຜູ້ເປັນເຈົ້າ ພຣະເຈົ້າຂອງຊາວອິສຣາເອນ, ຂ້ານ້ອຍໄດ້ເຮັດໃນສິ່ງ
ນີ້ ຄືໄດ້ເກັບຮັກສາຮູບເຄົາລົບໄວ້. 21ຂ້ານ້ອຍໄດ້ເຫັນເສື້ອຊັ້ນນອກອັນງົດງາມຫລາຍຈາກບາ-
ບີໂລນກັບເງິນ 200 ເຊເກນ ແລະຄຳ 1 ແທ່ງ ໜັກ 50 ເຊເກນ ຂ້ານ້ອຍຄິດຢາກໄດ້ສິ່ງ
ຂອງເຫລົ່ານັ້ນ ຈຶ່ງໄດ້ລັກເອົາມາ, ສິ່ງຂອງນັ້ນຂ້ານ້ອຍໄດ້ຝັງໄວ້ໃນດິນຢູ່ຄ້າຍພັກຂອງຂ້ານ້ອຍ
ແລະເງິນຢູ່ລຸ່ມ.

22ໂຢຊວຍໄດ້ໃຊ້ບາງຄົນແລ່ນໄປເບິ່ງທີ່ຜ້າເຕັນ[ກ] ຕາມທີ່ອາຄານໄດ້ບອກ ແລະໄດ້ເຫັນ
ເສື້ອເຊື່ອງໄວ້ໃນຜ້າເຕັນ. 23ພວກເຂົາໄດ້ເອົາມາໃຫ້ໂຢຊວຍ ແລະຊາວອິສຣາເອນເບິ່ງ ໂດຍ
ວາງໄວ້ຕໍ່ໜ້າພຣະຜູ້ເປັນເຈົ້າ 24ໂຢຊວຍ ແລະຊາວອິສຣາເອນໄດ້ເອົາອາຄານ, ເຊຣາ ກັບ
ເງິນ, ເສື້ອຊັ້ນນອກ, ລູກຊາຍ ລູກຍິງທັງໝົດພ້ອມທັງຝູງງົວ, ຝູງຄວາຍ ຝູງສັດນ້ອຍກັບຕູບ
ຜ້າເຕັນ ແລະທຸກໆສິ່ງທີ່ເປັນຂອງລາວຂຶ້ນໄປທີ່ຮ່ອມພູອາໂຄ 25ໂຢຊວຍໄດ້ກ່າວວ່າ "ເຈົ້າໄດ້
ເຮັດໃຫ້ພວກເຮົາລຳບາກແລະໄດ້ຮັບຄວາມເດືອດຮ້ອນ ພຣະຜູ້ເປັນເຈົ້າຈະໃຫ້ພວກເຈົ້າລຳ-
ບາກຢ່າງແສນສາຫັດໃນມື້ນີ້ ແລະບັນດາຊາວອິສຣາເອນໄດ້ແກວ່ງກ້ອນຫີນໃສ່ພວກເຂົາຈົນ
ຕາຍແລະຈູດພວກເຂົາດ້ວຍໄຟ 26ຫລັງຈາກນັ້ນ ກໍໄດ້ເກັບກ້ອນຫີນກອງໄວ້ເທິງຊາກສົບເປັນ
ກອງໃຫຍ່ ແລະກ້ອນຫີນນັ້ນຍັງມີຈົນເທົ່າທຸກມື້ນີ້ ພຣະຜູ້ເປັນເຈົ້າໄດ້ເຊົາຄຽດຮ້າຍ; ພວກເຂົາ
ຈຶ່ງໄດ້ເອີ້ນຊື່ບ່ອນນັ້ນວ່າຮ່ອມ ອາໂຄ[ຂ] ຈົນເຖິງທຸກມື້ນີ້

# ບົດທີ 8

## ໂຢຊວຍຍຶດ ແລະທຳລາຍເມືອງອາອີ

1ພຣະຜູ້ເປັນເຈົ້າໄດ້ກ່າວແກ່ໂຢຊວຍວ່າ "ຢ່າຊູ່ຢ້ານ ແລະຢ່າຕົກໃຈ ຈົ່ງເອົາທະຫານທັງ
ໝົດໄປນຳເຈົ້າແລະຈົ່ງລຸກຂຶ້ນໄປເມືອງອາອີ ກະສັດເມືອງອາອີພ້ອມກັບປະຊາຊົນໃນຫົວເມືອງ
ຕ່າງໆ ແລະດິນແດນທັງໝົດຂອງເມືອງອາອີ ເຮົາໄດ້ມອບໄວ້ໃນກຳມືຂອງເຈົ້າແລ້ວ. 2ເຈົ້າຈົ່ງ
ທຳລາຍເມືອງອາອີ ແລະກະສັດເມືອງ ຄືກັບເຈົ້າໄດ້ທຳລາຍເມືອງເຢຣິໂກ ແລະກະສັດ ຂອງ
ເມືອງນັ້ນ; ແຕ່ວ່າໃຫ້ພວກເຈົ້າປຸ້ນເອົາເຄື່ອງຂອງ ແລະສັດທັງຫລາຍມາເປັນຂອງພວກເຈົ້າ
ໃຫ້ພວກເຈົ້າຕັ້ງກອງດັກໄວ້ທາງດ້ານຫລັງຂອງເມືອງນັ້ນ.

3ໂຢຊວຍໄດ້ຍົກທັບພ້ອມກັບທະຫານທັງໝົດຂຶ້ນໄປຕໍ່ສູ້ເມືອງອາອີ ແລະໄດ້ເລືອກເອົາຄົນທີ່
ມີໃຈກ້າຫານສາມໝື່ນຄົນ ແລະໃຫ້ພວກເຂົາເຂົ້າໄປໃນເມືອງອາອີໃນເວລາກາງຄືນ. 4ໄດ້ສັ່ງ
ແກ່ພວກເຂົາວ່າ "ຈົ່ງຕັ້ງກອງດັກຊຸ່ມຕໍ່ສູ້ ຢູ່ດ້ານຫລັງ ຢ່າຊູໄປໄກຈາກເມືອງນັ້ນຫລາຍ ແລະ
ໃຫ້ທຸກໆຄົນຈົ່ງຕຽມຕົວໄວ້ໃຫ້ພ້ອມສະເໝີ. 5ຝ່າຍເຮົາກັບປະຊາຊົນທັງໝົດທີ່ຢູ່ນຳເຮົາຈະພາ-
ກັນຫຍັບເຂົ້າໄປໃກ້ເມືອງ ຖ້າພວກເຂົາອອກຕໍ່ສູ້ພວກເຮົາຄືກັບເທື່ອກ່ອນ ພວກເຮົາຈະປົບໜີຕໍ່-
ໜ້າພວກເຂົາ. 6ແລ້ວພວກເຂົາຈະໄລ່ຕິດຕາມທາງຫລັງພວກເຮົາຈົນໄປໄກຈາກເມືອງ ແລະ
ພວກເຂົາຈະເວົ້າວ່າ "ພວກເຮົາໄດ້ປົບໜີຈາກພວກເຂົາຄືເທື່ອກ່ອນ" ແລະພວກເຮົາຈະປົບໜີຕໍ່-

[ກ]ຄ້າຍພັກ [ຂ]ອາໂຄແປວ່າ ລຳບາກ

ໜ້າພວກເຂົາ. 7ຝ່າຍພວກເຈົ້າຈົ່ງຍົກກອງດັກຊຸ້ມຍຶດເອົາເມືອງ ເພາະພຣະຜູ້ເປັນເຈົ້າຂອງເຈົ້າ
ໄດ້ມອບເມືອງນັ້ນໄວ້ໃນກຳມືຂອງພວກເຈົ້າແລ້ວ. 8ເມື່ອພວກເຈົ້າຍຶດເອົາເມືອງໄດ້ແລ້ວຈົ່ງຈູດ
ເມືອງນັ້ນໂດຍໄວ ຈົ່ງເຮັດຕາມຄຳສັ່ງຂອງພຣະຜູ້ເປັນເຈົ້າ ແລະ ຈົ່ງເຮັດຕາມທີ່ເຮົາໄດ້ສັ່ງແກ່
ພວກເຈົ້າແລ້ວ” 9ໂຢຊວຍໄດ້ສົ່ງພວກເຂົາໄປ ແລະພວກເຂົາກໍໄດ້ໄປຕັ້ງກອງດັກຊຸ້ມຢູ່ລະຫວ່າງ
ກາງເມືອງເບັດເອນກັບເມືອງອາອີຊຶ່ງຢູ່ທາງທິດຕາເວັນຕົກຂອງເມືອງອາອີ; ໂຢຊວຍໄດ້ນອນ
ຄ້າງຄືນຢູ່ກັບຄົນທັງຫລາຍໃນຄືນນັ້ນ.

10ໂຢຊວຍໄດ້ລຸກຂຶ້ນແຕ່ເຊົ້າ ແລະໄດ້ກວດເບິ່ງປະຊາຊົນທັງໝົດ ເພິ່ນພ້ອມກັບພວກເຖົ້າແກ່
ຊາວອິສຣາເອນໄດ້ຂຶ້ນໄປເມືອງອາອີກ່ອນປະຊາຊົນ. 11ແລະທະຫານທັງໝົດທີ່ຢູ່ນຳໂຢຊວຍ
ກໍໄດ້ຂຶ້ນໄປຫມົດທຸກຄົນໂດຍເຄື່ອນຍ້າຍຫຍັບເຂົ້າໄປໃກ້ຈົນໄປຮອດຕໍ່ໜ້າເມືອງ ແລະຕັ້ງຄ້າຍ
ພັກຢູ່ທາງທິດເໜືອຂອງເມືອງອາອີ ຊຶ່ງມີຮ່ອມພູຢູ່ລະຫວ່າງກາງພວກເຂົາກັບເມືອງອາອີ
12ໂຢຊວຍໄດ້ເອົາທະຫານປະມານຫ້າພັນຄົນໂດຍໃຫ້ພວກເຂົາໄປຕັ້ງກອງດັກຊຸ້ມຢູ່ລະຫວ່າງ
ກາງເມືອງເບັດເອນກັບເມືອງອາອີທາງທິດຕາເວັນຕົກ. 13ເມື່ອພວກເຂົາໄດ້ຈັດຕັ້ງຄົນທັງໝົດ
ໄວ້ໃນຄ້າຍພັກຢູ່ທາງທິດເໜືອຂອງເມືອງ ແລະຈຳນວນຄົນທີ່ຈະຕັ້ງກອງດັກຊຸ້ມຢູ່ທາງທິດຕາ-
ເວັນຕົກໄວ້ແລ້ວ ໂຢຊວຍໄດ້ຫຍັບເຂົ້າໄປກາງຮ່ອມພູໃນເວລາກາງຄືນຂອງມື້ນັ້ນ.

14ຢູ່ມາ ເມື່ອກະສັດເມືອງອາອີໄດ້ຮູ້ເຫດການ, ປະຊາຊົນທີ່ຢູ່ໃນເມືອງກໍໄດ້ພາກັນລຸກຕັ້ງແຕ່
ເຊົ້າ ແລະໄດ້ພາກັນອອກໄປ; ທັງກະສັດ ແລະປະຊາຊົນເພື່ອໄປຕໍ່ສູ້ກັບຊາວອິສຣາເອນໃນ
ບ່ອນທີ່ກຳນົດໄວ້ ຊຶ່ງຢູ່ຕໍ່ໜ້າທົ່ງພຽງ, ແຕ່ກະສັດບໍ່ຮູ້ຕົວວ່າມີກອງດັກຊຸ້ມເພື່ອຕໍ່ສູ້ຢູ່ທາງຫລັງ
ເມືອງ 15ໂຢຊວຍກັບບັນດາຊົນຊາດອິສຣາເອນໄດ້ຍອມໃຫ້ຊາວເມືອງອາອີຕີຊະນະພວກເຂົາ
ແລະໄດ້ປົບໜີໄປທາງປ່າ (ເຂດແຫ້ງແລ້ງກັນດານ) 16ຄົນທັງຫລາຍທີ່ຢູ່ໃນເມືອງໄດ້ໂຮມກັນ
ດ້ວຍສຽງໂຮຮ້ອງດັງໆໄລ່ຕິດຕາມໄປ, ພວກເຂົາໄດ້ໄລ່ຕິດຕາມໂຢຊວຍໄປຫ່າງໄກຈາກເມືອງ
17ບໍ່ມີຊາຍຈັກຄົນທີ່ຄ້າງຢູ່ໃນເມືອງອາອີ ແລະເມືອງເບັດເອນ ພວກເຂົາໝົດທຸກຄົນໄດ້ອອກ
ໄປ ນຳຊາວອິສຣາເອນໂດຍທີ່ພວກເຂົາໄດ້ໄຂປະຕູເມືອງປະໄວ້ແລະໄດ້ໄລ່ຕິດຕາມພວກອິ-
ສຣາເອນໄປ

18ພຣະຜູ້ເປັນເຈົ້າໄດ້ບອກໂຢຊວຍວ່າ “ຈົ່ງເອົາຫອກທີ່ຢູ່ໃນມືຂອງເຈົ້າຢຽດອອກໄປສູ່ເມືອງ
ອາອີ ເຫດວ່າເຮົາຈະມອບເມືອງໄວ້ໃນກຳມືຂອງເຈົ້າ” ໂຢຊວຍກໍໄດ້ເອົາຫອກທີ່ຢູ່ໃນກຳມືຢຽດ
ອອກໄປສູ່ເມືອງອາອີ 19ຄົນທັງຫລາຍທີ່ໄດ້ຕັ້ງກອງດັກຊຸ້ມກໍໄດ້ແລ່ນເຂົ້າໄປໃນເມືອງ ສ່ວນ
ໂຢຊວຍກໍໄດ້ຢຽດມືອອກ ແລະໄດ້ເຂົ້າໄປຍຶດເອົາເມືອງ ພ້ອມທັງຟ້າວຈູດເມືອງນັ້ນ 20ຊາວ
ເມືອງອາອີໄດ້ຫລຽວຫລັງ ແລະໄດ້ເຫັນຄວັນໄຟຈາກເມືອງຂຶ້ນສູ່ທ້ອງຟ້າ ແລະພວກເຂົາບໍ່ມີ
ເຫື່ອແຮງທີ່ຈະໜີໄປທາງໃດ ແລະຈຳພວກທີ່ກຳລັງປົບໜີໄປທາງປ່າ (ແຫ້ງແລງກັນດານ) ກໍ
ໄດ້ຕ່າວກັບມາຕໍ່ສູ້ກັບພວກທີ່ໄດ້ໄລ່ຕິດຕາມພວກເຂົາ 21ເມື່ອໂຢຊວຍກັບຊາວອິສຣາເອນໄດ້ຮູ້
ວ່າພວກກອງດັກຊຸ້ມໄດ້ຍຶດເມືອງ ແລະຄວັນໄຟໃນເມືອງພຸ່ງຂຶ້ນແລ້ວ, ກໍໄດ້ພາກັນກັບຄືນ
ແລະຕີຊະນະຊາວເມືອງອາອີ ພວກກອງດັກຊຸ້ມໄດ້ອອກມາຈາກເມືອງ ແລະໄປຕ້ອນຮັບພວກ
ເຂົາ 22ເວລານັ້ນ ຊາວເມືອງອາອີໄດ້ຢູ່ລະຫວ່າງຊາວອິສຣາເອນເບື້ອງນີ້ກອງທັບໜຶ່ງ ແລະ

ອີກເບື້ອງນັ້ນກອງທັບໜຶ່ງ, ຊາວອິສຣາເອນໄດ້ໂຈມຕີຊະນະໂດຍຂ້າໃຫ້ຕາຍບໍ່ໃຫ້ເຫລືອຈັກຄົນ
23ແຕ່ພວກເຂົາໄດ້ຈັບກະສັດເມືອງອາອີທັງເປັນ ແລະໄດ້ພາໄປຫາໂຢຊວຍ

24ແລະຢູ່ຕໍ່ມາ ເມື່ອຊາວອິສຣາເອນໄດ້ຂ້າຊາວເມືອງອາອີທັງໝົດ ທັງຢູ່ໃນທົ່ງນາ, ໃນປ່າ
ບ່ອນທີ່ພວກເຂົາໄດ້ໄລ່ຕິດຕາມໄປນັ້ນສຳເລັດແລ້ວ, ຄົນທັງຫລາຍໄດ້ລົ້ມລົງຕາຍ ດ້ວຍຄົມ
ດາບຈົນຫາຍໝົດກ້ຽງ ແລະບັນດາຊາວອິສຣາເອນໄດ້ກັບຄືນມາໃນເມືອງອາອີ ແລະຕີດ້ວຍ
ຄົມດາບ 25ໃນມື້ນັ້ນ ຄົນໃນເມືອງອາອີທີ່ໄດ້ລົ້ມຕາຍທັງຊາຍຍິງລວມທັງໝົດສິບສອງພັນຄົນ
26ໂຢຊວຍບໍ່ໄດ້ຫົດມືທີ່ຢຽດອອກ ຈົນຊາວເມືອງອາອີທັງໝົດຖືກທຳລາຍ 27ແຕ່ວ່າບັນດາຊາວ
ອິສຣາເອນໄດ້ປຸ້ນເອົາສັດທັງໝົດກັບສິ່ງຂອງຈາກເມືອງນັ້ນມາເປັນຂອງຕົນຕາມຄຳທີ່ພຣະຜູ້-
ເປັນເຈົ້າໄດ້ສັ່ງແກ່ໂຢຊວຍ 28ໂຢຊວຍໄດ້ຈູດເມືອງອາອີໃຫ້ເປັນກອງຂີ້ເຖົ່າ ແລະເປັນເມືອງທີ່
ວ່າງເປົ່າຈົນເທົ່າທຸກມື້ນີ້ 29ລາວໄດ້ເອົາກະສັດເມືອງອາອີແຂວນໄວ້ເທິງຕົ້ນໄມ້ຈົນຮອດຕອນຄໍ່າ
ເມື່ອຕາເວັນຕົກໂຢຊວຍໄດ້ສັ່ງໃຫ້ເອົາສົບຂອງກະສັດລົງຈາກຕົ້ນໄມ້ໄປຖິ້ມຢູ່ທີ່ປະຕູເມືອງ ແລະ
ໄດ້ເກັບກ້ອນຫີນມາກອງໄວ້ໃຫ້ສູງເທິງສົບນັ້ນ ແລະກ້ອນຫີນນັ້ນຍັງມີຢູ່ຈົນເຖິງທຸກມື້ນີ້

## ໂຢຊວຍອ່ານພຣະບັນຍັດຂອງພຣະເຈົ້າທີ່ພູເອບານ

30ເມື່ອໂຢຊວຍໄດ້ກໍ່ສ້າງແທ່ນບູຊາສຳລັບພຣະຜູ້ເປັນເຈົ້າແລ້ວ ພຣະເຈົ້າຂອງຊາວອິສຣາ-
ເອນກໍສະຖິດຢູ່ເທິງພູເອບານ 31ຕາມທີ່ໂມເຊຂ້າໃຊ້ແຫ່ງພຣະຜູ້ເປັນເຈົ້າໄດ້ສັ່ງໄວ້ແກ່ພວກລູກ
ຫລານຊາວອິສຣາເອນ ແລະຕາມທີ່ຂຽນໄວ້ໃນໜັງສືພຣະບັນຍັດຂອງໂມເຊ ແມ່ນແທ່ນບູຊາທີ່
ເຮັດດ້ວຍຫີນໂດຍບໍ່ໄດ້ຕົບແຕ່ງ ແລະພວກເຂົາໄດ້ເຜົາເຄື່ອງຖວາຍບູຊາແດ່ພຣະຜູ້ເປັນເຈົ້າ
ເທິງແທ່ນນັ້ນ ແລະໄດ້ຖວາຍເຄື່ອງບູຊາເພື່ອຄວາມສາມັກຄີທຳ 32ໃນບ່ອນນັ້ນ ໂຢຊວຍໄດ້
ຂຽນເທິງຫີນຈາລຶກພຣະບັນຍັດຂອງໂມເຊ ຊຶ່ງເພິ່ນໄດ້ຂຽນໄວ້ຕໍ່ໜ້າພວກລູກຫລານຊາວອິ-
ສຣາເອນ 33ບັນດາຊາວອິສຣາເອນກັບພວກເຖົ້າແກ່ ແລະພວກຕຸລາການ ພວກຜູ້ຕັດສິນຊາວ
ອິສຣາເອນ ກໍໄດ້ຢືນຢູ່ທາງຂ້າງ ຂອງຫີບຄຳສັນຍາ ຕໍ່ໜ້າພວກປະໂລຫິດຊາວເລວີທີ່ໄດ້ຫາມ
ຫີບຄຳສັນຍາຂອງພຣະຜູ້ເປັນເຈົ້າທັງຄົນຕ່າງຊາດກັບຊາວອິສຣາເອນດ້ວຍ ເຄິ່ງໜຶ່ງຢູ່ຕໍ່ໜ້າພູ
ເກຣິຊິມ ແລະເຄິ່ງໜຶ່ງຢູ່ຕໍ່ໜ້າພູເອບານຕາມໂມເຊຂ້າໃຊ້ພຣະຜູ້ເປັນເຈົ້າໄດ້ສັ່ງໄວ້ໃຫ້ອວຍ-
ພອນແກ່ພວກອິສຣາເອນໃນຕອນຕົ້ນນັ້ນ. 34ພາຍຫລັງເຫດການນັ້ນ ລາວໄດ້ອ່ານຖ້ອຍຄຳທັງ
ໝົດຂອງພຣະບັນຍັດ ທັງຄວາມພອນກັບຄຳສາບແຊ່ງຕາມຖ້ອຍຄຳທີ່ຂຽນໄວ້ໃນໜັງສືພຣະບັນ-
ຍັດນັ້ນ 35ຖ້ອຍຄຳທັງໝົດທີ່ໂມເຊໄດ້ສັ່ງໄວ້ບໍ່ມີຈັກຄຳດຽວທີ່ໂຢຊວຍບໍ່ໄດ້ອ່ານຕໍ່ໜ້າພວກຊຸມ
ຊົນຊາວອິສຣາເອນທັງຜູ້ຍິງກັບເດັກນ້ອຍ ແລະບັນດາຄົນຕ່າງຊາດທີ່ຢູ່ນຳພວກເຂົາ

# ບົດທີ 9

## ໂຢຊວຍຖືກຊາວກິເບໂອນຫລອກລວງ (ກົນອຸບາຍຂອງກິເບໂອນ)

1ຢູ່ມາ ບັນດາກະສັດທີ່ຢູ່ເຂດແມ່ນ້ຳຢໍແດນ, ຢູ່ເທິງພູ ແລະທົ່ງພຽງ, ແຄມທະເລເມດິແຕ-
ຣາເນຈົນຮອດພູເຂົາເລບານອນ; ຊາວຮິດຕີກັບຊາວອະໂມຣິດ, ຊາວການາອານ, ຊາວເປຣິ-
ຊີ ຊາວຮີວີ ແລະຊາວເຢບຸດ ເມື່ອໄດ້ຍິນຂ່າວເຫດການທັງປວງທີ່ເກີດຂຶ້ນ 2ພວກເຂົາໄດ້ເຕົ້າ-

ໂຮມກັນເພື່ອໄປສູ້ຮົບກັບ ໂຢຊວຍ ແລະພວກອິສຣາເອນ
3ເມື່ອປະຊາຊົນເມືອງ ກິເບໂອນ ໄດ້ຍິນຂ່າວເລື່ອງທີ່ ໂຢຊວຍ ໄດ້ເຮັດແກ່ເມືອງ ເຢຣີໂກ ແລະ
ເມືອງ ອາອີ 4ແລ້ວພວກເຂົາໄດ້ເຮັດກົນອຸບາຍ ໂດຍ ແຕ່ງຕົວຄືກັບຄົນທີ່ໄດ້ເດີນທາງມາແຕ່ໄກ
ແລະໄດ້ເອົາຖົງປ່ານເກົ່າໆປູຫລັງລາຂອງພວກເຂົາ, ຖືຖົງໜັງນໍ້າອະງຸ່ນອັນເກົ່າທີ່ຂາດ ແລະ
ໜັງຕາບແລ້ວ 5ແລະຖືເກີບທີ່ເກົ່າແລ້ວ ແລະນຸ່ງເຄື່ອງທີ່ຂາດຫຽ້ນ, ເຂົ້າຈີ່ຢູ່ໃນຖົງຂອງພວກ
ເຂົາກໍແຫ້ງບູດ ແລະເນົ່າເພັ້ນ 6ພວກເຂົາໄດ້ໄປຫາ ໂຢຊວຍ ທີ່ຄ້າຍພັກໃນເມືອງ ກິນການ ແລະ
ໄດ້ກ່າວແກ່ ໂຢຊວຍ ແລະຊາວ ອິສຣາເອນ ວ່າ “ພວກເຮົາມາແຕ່ປະເທດໄກ ແລະບັດນີ້ ເຊີນ
ພວກທ່ານເຮັດສັນຍາຮ່ວມກັບເຮົາທ້ອນ” 7ຊາວ ອິສຣາເອນ ໄດ້ກ່າວແກ່ຊາວ ຮີວີ ວ່າ “ຖ້າວ່າເຈົ້າ
ຢູ່ທ່າມກາງພວກເຮົາ, ພວກເຮົາຈຶ່ງຈະເຮັດສັນຍາກັບເຈົ້າໄດ້” 8ແລະ ໂຢຊວຍ ໄດ້ຖາມພວກເຂົາ
ວ່າ “ພວກທ່ານແມ່ນໃຜແລະມາແຕ່ໃສ?” 9ພວກເຂົາໄດ້ຕອບເພິ່ນວ່າ “ພວກຂ້າໃຊ້ ຂອງທ່ານ
ມາແຕ່ປະເທດໄກຈາກແດນໄກທີ່ສຸດ ດ້ວຍນາມຊື່ແຫ່ງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງທ່ານ
ດ້ວຍວ່າພວກເຮົາໄດ້ຍິນສຽງຂອງພຣະອົງ 10ແລະໄດ້ຍິນເຖິງການທັງປວງທີ່ພຣະອົງໄດ້ເຮັດຢູ່
ປະເທດ ເອຢິບ ແລະໄດ້ເຮັດແກ່ກະສັດຊາວ ອະໂມຣິດ ແລະສອງອົງທີ່ຢູ່ຟາກແມ່ນໍ້າຢໍແດນ ພຸ້ນ
ຄື ເຮັດແກ່ເຈົ້າ ສີໂຮນ ກະສັດເມືອງ ເຮັດຊະໂບນ ແລະເຈົ້າ ໂອກ ກະສັດເມືອງ ບາຊານ ທີ່ອາໃສຢູ່
ເມືອງ ອັດຊະຕະໂຣດ 11ພວກເຖົ້າແກ່ກັບປະຊາຊົນທັງໝົດຂອງປະເທດພວກເຮົາໄດ້ບອກພວກ
ເຮົາວ່າ “ຈົ່ງເອົາອາຫານແລ້ວອອກເດີນທາງໄປຫາພວກເຂົາ ແລະບອກວ່າ ພວກເຮົາເປັນຂ້າ
ໃຊ້ຂອງພວກທ່ານ ແລະບັດນີ້ ຈົ່ງເຮັດສັນຍາກັບພວກເຮົາທ້ອນ 12ອັນນີ້ແມ່ນເຂົ້າຈີ່ຂອງພວກ
ເຮົາ, ພວກເຮົາໄດ້ເອົາເຂົ້າຈີ່ທີ່ຍັງເປັນກ້ອນຢູ່ໃສ່ຖົງ ໃນເວລາທີ່ອອກເຮືອນມາເພື່ອຈະມາຫາ
ພວກທ່ານ ຈົ່ງເບິ່ງດຽວນີ້ມັນແຫ້ງ ແລະບູດແລ້ວ 13ແລະອັນນີ້ແມ່ນຖົງໜັງນໍ້າອະງຸ່ນທີ່ເຮົາໄດ້
ໃສ່ເຕັມຖົງໜັງ ຈົ່ງເບິ່ງດຽວນີ້ ມັນກໍຂາດແລ້ວ ແລະອັນນີ້ເປັນເສື້ອຜ້າແລະເກີບຂອງພວກເຮົາ
ທີ່ຫຽ້ນແລ້ວ ຍ້ອນຫົນທາງຍາວໄກຫລາຍ” 14ຊາວ ອິສຣາເອນ ທັງໝົດໄດ້ຮັບເອົາເຂົ້າບາງສ່ວນ
ຈາກພວກເຂົາ ແລະບໍ່ໄດ້ສືບຖາມພຣະຄໍາຂອງ ພຣະຜູ້ເປັນເຈົ້າ (ບໍ່ໄດ້ຂໍຄໍາແນະນໍາຈາກ ພຣະ-
ຜູ້ເປັນເຈົ້າ) 15ໂຢຊວຍ ໄດ້ຕົກລົງສ້າງມິດຕະພາບກັບຊາວ ກິເບໂອນ ແລະ ໄດ້ເຮັດສັນຍາ ໃຫ້
ພວກເຂົາມີຊີວິດຢູ່ ພວກຜູ້ນໍາຂອງຊຸມນຸມຊົນ ອິສຣາເອນ ໄດ້ປະຕິຍານໄວ້ກັບພວກເຂົາດ້ວຍຄໍາ
ສາບານ

16ຢູ່ມາ ເມື່ອໄດ້ເຮັດສັນຍາກັບຊາວ ກິເບໂອນ ໄດ້ສາມມື້ ຊາວ ອິສຣາເອນ ໄດ້ຍິນວ່າພວກເຂົາ
ຢູ່ໃກ້ຄຽງກັບພວກຕົນ 17ພວກລູກຫລານ ອິສຣາເອນ ໄດ້ເຄື່ອນຍ້າຍ ແລະອອກເດີນທາງ, ເວລາ
ໄປຮອດເມືອງຂອງພວກເຂົາໃນມື້ທີສາມກໍຮູ້ວ່າເມືອງຂອງພວກເຂົາຊື່ວ່າ ກິເບໂອນ, ເກຟີຣາ,
ເບເອໂຣດ, ກີຣີຢາດ-ເຢອາຣິມ 18ລູກຫລານ ອິສຣາເອນ ບໍ່ໄດ້ໂຈມຕີພວກເຂົາ ດ້ວຍວ່າຜູ້ນໍາໃນ
ຊຸມນຸມຊົນຊາວ ອິສຣາເອນ ໄດ້ປະຕິຍານໄວ້ກັບພວກເຂົາໂດຍຄໍາສາບານໃນນາມຊື່ຂອງ ພຣະຜູ້-
ເປັນເຈົ້າ ພຣະເຈົ້າ ຂອງຊາວ ອິສຣາເອນ ແລະບັນດາພວກຊຸມນຸມຈຶ່ງໄດ້ຈົ່ມຕໍ່ພວກຜູ້ນໍາ.
19ບັນດາຜູ້ນໍາໄດ້ກ່າວກັບພວກຊຸມນຸມວ່າ “ພວກເຮົາໄດ້ປະຕິຍານ ແລະສັນຍາໄວ້ກັບພວກເຂົາ
ດ້ວຍນາມຊື່ຂອງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງຊາວ ອິສຣາເອນ ດັ່ງນັ້ນພວກເຮົາຈະໂຈມຕີ

ພວກເຂົາບໍ່ໄດ້ 20ພວກເຮົາຈະໃຫ້ພວກເຂົາມີຊີວິດຢູ່ ແລະພວກເຮົາຈະບໍ່ຄຽດແຄ້ນຕໍ່ພວກເຂົາ
ຍ້ອນຄຳສັນຍາທີ່ເຮົາມີຕໍ່ພວກເຂົາແລ້ວວ່າຈະບໍ່ທຳຮ້າຍ ເພາະເຮົາໄດ້ສັນຍາຕໍ່ພວກເຂົາແລ້ວ”
21ພວກຜູ້ນຳໄດ້ກ່າວວ່າ “ໃຫ້ພວກເຂົາມີຊີວິດຢູ່ ແຕ່ໃຫ້ພວກເຂົາເປັນຜູ້ໄປຫາຟືນ ແລະຕັກນ້ຳ
ໃຫ້ບັນດາຊຸມນຸມຊົນ” ຕາມທີ່ພວກຜູ້ນຳໄດ້ສັນຍາກັບພວກເຂົາ

22ໂຢຊວຍໄດ້ເອີ້ນພວກເຂົາມາ ແລະໄດ້ຖາມວ່າ “ເຫດໃດພວກທ່ານຈຶ່ງໄດ້ລໍ້ລວງພວກເຮົາ
ວ່າພວກທ່ານອາໃສຢູ່ຫ່າງໄກຈາກພວກເຮົາ 23ຍ້ອນການລໍ້ລວງຂອງພວກເຈົ້າ ພວກເຈົ້າຈຶ່ງຖືກ
ສາບແຊ່ງ ແລະເປັນທາດຄືເປັນຜູ້ໄປຫາຟືນ ຕັກນ້ຳສຳລັບພຣະວິຫານຂອງພຣະເຈົ້າຂອງເຮົາ
ຕະຫລອດໄປ” 24ພວກເຂົາໄດ້ຕອບໂຢຊວຍໂດຍກ່າວວ່າ “ຍ້ອນວ່າພວກເຮົາໄດ້ຍິນພວກຂ້າໃຊ້
ຂອງທ່ານວ່າ: ພຣະຜູ້ເປັນເຈົ້າ ພຣະເຈົ້າຂອງທ່ານໄດ້ສັນຍາກັບໂມເຊຜູ້ຮັບໃຊ້ຂອງພຣະອົງ
ວ່າຈະມອບດິນແດນນີ້ໃຫ້ແກ່ພວກທ່ານ ແລະຈະທຳລາຍບັນດາຊົນຊາດໃນແຜ່ນດິນນີ້ ດັ່ງນັ້ນ
ພວກເຮົາຢ້ານກົວຫລາຍ ພວກເຮົາຈຶ່ງໄດ້ເຮັດຢ່າງນັ້ນແກ່ທ່ານ 25ບັດນີ້ ພວກເຮົາຢູ່ໃນກຳມື
ຂອງທ່ານແລ້ວ ທ່ານຈົ່ງເຮັດແກ່ພວກເຮົາຕາມທ່ານເຫັນດີສາ” 26ໂຢຊວຍໄດ້ເຮັດດັ່ງນີ້ແກ່ພວກ
ເຂົາຄື: ຊ່ວຍພວກເຂົາໃຫ້ພົ້ນຈາກການຂ້າຟັນຂອງຊາວອິສຣາເອນ 27ໃນມື້ນັ້ນ ໂຢຊວຍໄດ້ກັກ
ຂັງພວກເຂົາໄວ້ໃຫ້ເປັນຜູ້ໄປຫາຟືນ ແລະຕັກນ້ຳສຳລັບພວກຊຸມນຸມຊົນ ແລະສຳລັບແທ່ນບູຊາ
ຂອງພຣະຜູ້ເປັນເຈົ້າ

# ບົດທີ 10

## ຊາວອະໂມຣິດເສຍໄຊ

1ອາໂດນີ-ເຊເດັກ ເຈົ້າຊີວິດກຸງເຢຣູຊາເລັມໄດ້ຍິນຂ່າວວ່າ ໂຢຊວຍຍຶດ ແລະທຳລາຍ
ເມືອງອາອີ ພ້ອມທັງຂ້າເຈົ້າຊີວິດໃນເມືອງນັ້ນເໝືອນດັ່ງໄດ້ທຳລາຍເມືອງເຢຣີໂກມາແລ້ວ ທັງ
ໄດ້ຍິນຂ່າວຊາວກິເບໂອນກໍເຮັດສັນຍາສັນຕິພາບ ແລະຮ່ວມມືກັບພວກອິສຣາເອນ. 2ດ້ວຍ
ເຫດນີ້ ປະຊາຊົນໃນກຸງເຢຣູຊາເລັມຈຶ່ງພາກັນຢ້ານຫລາຍ ເພາະເມືອງກິເບໂອນເປັນເມືອງ
ໃຫຍ່ເທົ່າກັບມະຫານະຄອນໜຶ່ງ ແລະໃຫຍ່ກວ່າເມືອງອາອີອີກ ພ້ອມທັງທະຫານກໍເປັນຄົນເກັ່ງ
ກ້າ. 3ດັ່ງນັ້ນ ເຈົ້າຊີວິດ ອາໂດນີ-ເຊເດັກຈຶ່ງສົ່ງຄົນອອກໄປ ໂຮຣາມ ເຈົ້າຊີວິດເມືອງເຮັບ-
ໂຣນ ປີຣາມເຈົ້າຊີວິດເມືອງຢາຣະມຸດ ຢາເຟຍ ເຈົ້າຊີວິດເມືອງລາກິດ ແລະເດບີເຈົ້າຊີວິດ
ເມືອງເອັກໂລນ. 4ໂດຍເວົ້າວ່າ, “ຂໍໃຫ້ມາຊ່ອຍຂ້າພະເຈົ້າຕີເອົາເມືອງກິເບໂອນແດ່ ເພາະວ່າ
ປະຊາຊົນເມືອງນີ້ ໄດ້ເຮັດສັນຍາສັນຕິພາບກັບໂຢຊວຍ ແລະພວກອິສຣາເອນແລ້ວ.” 5ຝ່າຍ
ເຈົ້າຊີວິດຂອງພວກອະໂມຣິດທັງຫ້າອົງນີ້ ຄື ເຈົ້າຊີວິດກຸງເຢຣູຊາເລັມ ເມືອງເຮັບໂຣນ ເມືອງ
ຢາຣະມຸດ ເມືອງລາກິດ ແລະເມືອງເອັກໂລນ ໄດ້ພ້ອມພາກັນຍົກກອງທັບມາອ້ອມ ແລະເຂົ້າ
ໂຈມຕີເມືອງກິເບໂອນ.

6ໃນເວລານັ້ນ ຊາວກິເບໂອນກໍຟ້າວສົ່ງຄົນໄປຫາໂຢຊວຍຊຶ່ງຢູ່ໃນຄ້າຍທີ່ກິນການ ໂດຍ
ບອກວ່າ ຈົ່ງຟ້າວມາຊ່ອຍພວກຂ້ານ້ອຍໃຫ້ພົ້ນຈາກການນີ້ ເພາະວ່າເຈົ້າຊີວິດຂອງພວກອະໂມ-
ຣິດທັງໝົດ ຊຶ່ງຢູ່ເທິງພູຂອງປະເທດນີ້ໄດ້ພາກັນຍົກທັບມາຕໍ່ສູ້ພວກຂ້ານ້ອຍ ຂໍຢ່າປະຖິ້ມພວກ

ຂ້ານ້ອຍທ້ອນ." [7-8]"ໂຢຊວຍ ພ້ອມທັງກອງທັບກໍພາກັນອອກຈາກ ກິນການ ພຣະຜູ້ເປັນເຈົ້າ
ຊົງກ່າວແກ່ໂຢຊວຍວ່າ, "ຢ່າຢ້ານພວກເຂົາ ເພາະວ່າເຮົາໄດ້ມອບພວກເຂົາໄວ້ໃນກຳມືຂອງ
ເຈົ້າແລ້ວ ບໍ່ມີຜູ້ໃດຈະສາມາດຕໍ່ສູ້ເຈົ້າໄດ້." [9]ຫລັງຈາກນັ້ນ ໂຢຊວຍກໍເຄື່ອນທັບອອກໄປຈາກ
ກິນການ ໂດຍເດີນທາງຕະຫລອດທັງຄືນ ແລະເຂົ້າບຸກໂຈມຕີພວກເຂົາທັນທີ. [10]ພຣະຜູ້ເປັນ-
ເຈົ້າກໍຊົງເຮັດໃຫ້ພວກເຂົາແຕກຕື່ນກະຈັດກະຈາຍຕໍ່ໜ້າກອງທັບພວກອິສຣາເອນ ຝ່າຍພວກ
ອິສຣາເອນກໍຂ້າພວກເຂົາເປັນຈຳນວນຫລວງຫລາຍຢູ່ທີ່ເມືອງກິເບໂອນ ແລະໄລ່ຕິດຕາມພວກ
ທີ່ຍັງເຫລືອລົງຈາກພູທີ່ເມືອງເບັດ-ໂຮໂຮນ ແລ້ວໄລ່ຕິດຕາມພວກເຂົາໄປຈົນຮອດເມືອງອາເຊ-
ກາ ແລະເມືອງມັກເກດາ. [11]ໃນຂະນະທີ່ພວກເຂົາກຳລັງປົບໜີຈາກເມືອງເບັດ-ໂຮໂຮນໄປສູ່
ເມືອງອາເຊກາ ພຣະຜູ້ເປັນເຈົ້າຊົງເຮັດໃຫ້ໝາກເຫັບໃຫຍ່ ຈາກທ້ອງຟ້າຕົກລົງມາຖືກພວກ
ເຂົາຕາຍ ພວກທີ່ຕາຍຍ້ອນໝາກເຫັບຕົກຖືກນັ້ນ ມີຫລາຍກວ່າພວກທີ່ຕາຍຍ້ອນດາບຂອງພວກ
ອິສຣາເອນ.

[12]ໃນມື້ທີ່ພຣະຜູ້ເປັນເຈົ້າ ຊົງເຮັດໃຫ້ພວກອິສຣາເອນຊະນະພວກອະໂມຣິດນັ້ນ ໂຢຊວຍ
ຂາບທູນພຣະຜູ້ເປັນເຈົ້າຕໍ່ໜ້າພວກອິສຣາເອນວ່າ, "ດວງຕາເວັນເອີຍ ຈົ່ງຢຸດຢູ່ເມືອງກິເບ-
ໂອນດວງເດືອນເອີຍ ຈົ່ງຢຸດຢູ່ລະຫວ່າງຮ່ອມພູອາຢາໂລນ."

[13]ແລ້ວຕາເວັນ ແລະດວງເດືອນກໍຢຸດຢູ່ບ່ອນດັ່ງກ່າວ ຈົນຄົນໃນຊາດນັ້ນໄດ້ຜາບແພ້ສັດຕູ
ເລື່ອງນີ້ໄດ້ບັນທຶກໄວ້ໃນປຶ້ມຂອງຢາຊາ ແລະຕາເວັນນັ້ນໄດ້ຢຸດຢູ່ກາງທ້ອງຟ້າໂດຍບໍ່ຕົກຈົນ
ຄົບໜຶ່ງວັນ. [14]ຕັ້ງແຕ່ກ່ອນຕະຫລອດມາເຖິງດຽວນີ້ ບໍ່ເຄີຍມີມື້ໜຶ່ງມື້ໃດທີ່ພຣະຜູ້ເປັນເຈົ້າໄດ້ຟັງ
ຄວາມຂອງມະນຸດຄືກັບມື້ນັ້ນ ເຫດວ່າພຣະອົງຊົງຮົບເສິກຢູ່ນຳຝ່າຍພວກອິສຣາເອນ.

[15]ຫລັງຈາກນັ້ນ ໂຢຊວຍທັງກອງທັບ ກໍກັບຄືນສູ່ຄ້າຍທີ່ ກິນການ.

[16]ກະສັກຫ້າອົງໄດ້ປົບໜີ ແລະລີ້ຕົວຢູ່ໃນຖ້ຳທີ່ມັກເກດາ [17]ມີຄົນມາບອກໂຢຊວຍວ່າ "ກະ-
ສັດຫ້າອົງພວມລີ້ຕົວຢູ່ໃນຖ້ຳມັກເກດາ" [18]ໂຢຊວຍໄດ້ບອກວ່າ "ກິ້ງຫີນກ້ອນໃຫຍ່ອັດປາກຖ້ຳ
ໄວ້ແລະໃຫ້ບາງຄົນເຝົ້າຍາມຢູ່ທີ່ນັ້ນ [19]ຝ່າຍພວກທ່ານຈົ່ງໄລ່ຕິດຕາມສັດຕູ ແລະໂຈມຕີພວກ
ເຂົາໄປ ຢ່າໃຫ້ພວກເຂົາໄດ້ເຂົ້າໄປໃນເມືອງຂອງພວກເຂົາ ເພາະວ່າພຣະຜູ້ເປັນເຈົ້າພຣະເຈົ້າ
ຂອງທ່ານໄດ້ມອບພວກເຂົາໄວ້ໃນມືຂອງ ທ່ານແລ້ວ" [20]ເມື່ອໂຢຊວຍ ແລະລູກຫລານອິສຣາ-
ເອນໄດ້ຕີຊະນະພວກເຂົາເປັນຈຳນວນຫລວງຫລາຍແລ້ວ ສ່ວນຜູ້ທີ່ເຫລືອຢູ່ໄດ້ຫລົບໜີເຂົ້າໄປ
ໃນເມືອງທີ່ມີກຳແພງອ້ອມໄວ້ [21]ປະຊາຊົນທັງປວງໄດ້ກັບມາຫາໂຢຊວຍທີ່ຄ້າຍພັກຢູ່ມັກເກດາ
ດ້ວຍຄວາມສຸກສຳລານ ແລະບໍ່ມີຜູ້ໃດກ້າເວົ້າສິ່ງໜຶ່ງສິ່ງໃດຕໍ່ສູ້ພວກລູກຫລານອິສຣາເອນ
[22]ໂຢຊວຍໄດ້ບອກວ່າ "ຈົ່ງໄຂປາກຖ້ຳ ແລະນຳພວກກະສັດທັງຫ້າອົງນັ້ນອອກຈາກຖ້ຳມາຫາ
ຂ້ອຍສາ [23]ພວກເຂົາໄດ້ພາກະສັດທັງຫ້າອອກມາຈາກຖ້ຳມາຫາໂຢຊວຍ ຄືກະສັດເຢຣູຊາເລັມ
ກະສັດເຮັບໂຣນ, ກະສັດຢາຣະມຸດ, ກະສັດລາກິດ, ກະສັດເອັກໂລນ [24]ເມື່ອພວກເຂົາໄດ້ພາ
ກະສັດທັງຫ້າມາຫາໂຢຊວຍແລ້ວເພິ່ນໄດ້ເອີ້ນຜູ້ຊາຍອິສຣາເອນທັງຫລາຍມາ ແລະສັ່ງນາຍ
ທະຫານທີ່ໄດ້ໄປນຳວ່າ "ທ່ານທັງຫລາຍຈົ່ງຫຍັບເຂົ້າມາ ແລະຢຽບຄໍກະສັດທັງຫລາຍນີ້" ພວກ
ເຂົາກໍປະຕິບັດໂດຍຢຽບຄໍກະສັດເຫລົ່ານັ້ນ [25]ໂຢຊວຍໄດ້ບອກພວກເຂົາວ່າ "ຢ່າຊູຢ້ານ ແລະ

ຢ່າຕົກໃຈ ຈົ່ງເຂັ້ມແຂງ ແລະກ້າຫານ ເຫດວ່າພຣະຜູ້ເປັນເຈົ້າຈະເຮັດຢ່າງນີ້ແກ່ສັດຕູທັງປວງ
ຂອງພວກທ່ານທີ່ພວກທ່ານໄດ້ສູ້ຮົບນັ້ນ” [26]ຫລັງຈາກນັ້ນ ໂຢຊວຍ ໄດ້ຕີກະສັດທັງຫ້າໃຫ້ຕາຍ
ແລະໄດ້ແຂວນໄວ້ທີ່ຕົ້ນໄມ້ຫ້າຕົ້ນຈົນຮອດຕອນຄ່ຳ [27]ເມື່ອຕາເວັນຕົກ ໂຢຊວຍ ໄດ້ສັ່ງໃຫ້ເອົາ
ຊາກສົບລົງຈາກຕົ້ນໄມ້ ແລະນຳໄປຖິ້ມໄວ້ໃນຖ້ຳບ່ອນທີ່ກະສັດທັງຫ້າໄດ້ລີ້ຕົວຢູ່ ແລະພວກເຂົາ
ໄດ້ເອົາກ້ອນຫີນໃຫຍ່ອັດປາກຖ້ຳໄວ້ ຫີນນັ້ນກໍຢູ່ທີ່ນັ້ນຈົນເຖິງທຸກມື້ນີ້
[28]ໃນມື້ນັ້ນ ໂຢຊວຍ ໄດ້ຍຶດເອົາເມືອງ ມັກເກດາ ແລະໄດ້ໂຈມຕີເມືອງນັ້ນດ້ວຍຄົມດາບ
ຮ່ວມທັງກະສັດ ແລະທຸກຄົນທີ່ຢູ່ໃນເມືອງນັ້ນ ເພິ່ນໄດ້ທຳລາຍໂດຍບໍ່ໃຫ້ເຫລືອຈັກຄົນ ແລະໄດ້
ທຳລາຍກະສັດ ມັກເກດາ ຄືກັບໄດ້ທຳລາຍເມືອງ ເຢຣິໂກ
[29]ໂຢຊວຍ ກັບບັນດາຊາວ ອິສຣາເອນ ໄດ້ພາກັນຍົກກອງທັບຈາກ ມັກເກດາ ໄປເມືອງ ລິບນາ
ແລະໄດ້ເຮັດເສິກໂຈມຕີຕໍ່ສູ້ເມືອງ ລິບນາ [30]ພຣະຜູ້ເປັນເຈົ້າ ໄດ້ມອບເມືອງນັ້ນທັງໝົດພ້ອມກັບ
ກະສັດເມືອງນັ້ນໄວ້ໃນມືຊາວ ອິສຣາເອນ ແລະພວກເຂົາໄດ້ໂຈມຕີເມືອງນັ້ນພ້ອມກັບທຸກໆຄົນ
ທີ່ຢູ່ທີ່ນັ້ນດ້ວຍຄົມດາບບໍ່ໃຫ້ເຫລືອຈັກຄົນ ແລະໄດ້ທຳລາຍກະສັດຂອງເມືອງນັ້ນຄືກັບໄດ້ທຳ-
ລາຍກະສັດເມືອງ ເຢຣິໂກ
[31]ໂຢຊວຍ ກັບ ບັນດາ ຊາວ ອິສຣາເອນ ໄດ້ ພາກັນ ຍົກ ທັບ ແຕ່ ເມືອງ ລິບນາ ໄປ ເມືອງ ລາກິດ
ແລະໄດ້ຕັ້ງຄ້າຍພັກໂຈມຕີເມືອງນັ້ນ [32]ພຣະຜູ້ເປັນເຈົ້າ ໄດ້ມອບເມືອງ ລາກິດ ໄວ້ໃນກຳມືພວກ
ອິສຣາເອນ ແລະພວກເຂົາໄດ້ຍຶດເມືອງນັ້ນໃນມື້ທີສອງແລະໄດ້ໂຈມຕີເມືອງກັບຄົນທຸກຄົນໃນ
ບ່ອນນັ້ນດ້ວຍຄົມດາບຄືກັບ ເຫດການທັງໝົດທີ່ໄດ້ເຮັດໃນເມືອງ ລິບນາ [33]ເມື່ອນັ້ນ ໂຮຣາມ
ກະສັດເມືອງ ເກເຊ ໄດ້ຂຶ້ນໄປຊ່ວຍເມືອງ ລາກິດ ໂຢຊວຍ ສູ້ຮົບຊະນະກະສັດເມືອງ ເກເຊພ້ອມ
ກັບປະຊາຊົນໂດຍບໍ່ເຫລືອຈັກຄົນ
[34]ໂຢຊວຍກັບບັນດາຊາວ ອິສຣາເອນ ໄດ້ພາກັນຍົກທັບແຕ່ລາກິດ ໄປເມືອງ ເອັກໂລນ ແລະ
ໄດ້ຕັ້ງຄ້າຍພັກເຮັດເສິກໂຈມຕີເມືອງນັ້ນ [35]ໃນມື້ນັ້ນໄດ້ຍຶດເມືອງ ເອັກໂຣນ ແລະໂຈມຕີ (ຕໍ່ສູ້)
ດ້ວຍຄົມດາບທຳລາຍທຸກຄົນໃນເມືອງນັ້ນໃຫ້ດັບສູນ ຄືກັບການທັງປວງທີ່ໄດ້ເຮັດໃນເມືອງ ລາ-
ກິດ
[36]ໂຢຊວຍ ແລະບັນດາຊາວ ອິສຣາເອນ ໄດ້ພາກັນຍົກທັບແຕ່ ເອັກໂລນ ຂຶ້ນໄປເມືອງ ເຮັບ-
ໂຣນ ແລະໄດ້ຕໍ່ສູ້ (ໂຈມຕີ) ເມືອງນັ້ນດ້ວຍຄົມດາບ ແລະຍຶດເອົາເມືອງນັ້ນ ກະສັດ ແລະ
ເມືອງພ້ອມທັງປະຊາຊົນໄດ້ຖືກທຳລາຍ ໂດຍບໍ່ໃຫ້ເຫລືອຈັກຄົນດຽວ ການທັງໝົດຄືກັບທີ່ໄດ້
ເຮັດແກ່ເມືອງ ເອັກໂລນ ເພິ່ນໄດ້ທຳລາຍເມືອງກັບຄົນທຸກຄົນໃນບ່ອນນັ້ນໃຫ້ດັບສູນ [37]ໂດຍໄດ້
ຍຶດເອົາເມືອງ ແລະໂຈມຕີດ້ວຍຄົມດາບທຳລາຍກະສັດເມືອງ ແລະຄົນທຸກຄົນຢູ່ໃນທີ່ນັ້ນໂດຍບໍ່
ໃຫ້ເຫລືອຈັກຄົນດຽວຄືກັບທີ່ໄດ້ເຮັດແກ່ເມືອງ ເອັກໂລນ ເພິ່ນໄດ້ທຳລາຍເມືອງກັບທຸກຄົນໃນທີ່
ນັ້ນໃຫ້ດັບສູນ
[38]ໂຢຊວຍ ແລະບັນດາຊາວ ອິສຣາເອນ ໄດ້ພາກັນກັບໄປໂຈມຕີເມືອງ ເດບີ [39]ໂຢຊວຍ ໄດ້
ໂຈມຕີຊະນະດິນແດນນັ້ນທັງໝົດຄື: ພູເຂົາ, ທົ່ງພຽງທາງທິດໃຕ້ ແລະເນີນພູທັງຫລາຍ ກະສັດ
ທັງໝົດຂອງພວກເຂົາ ເພິ່ນບໍ່ໄດ້ໃຫ້ແມ່ນແຕ່ຄົນດຽວເຫລືອຢູ່, ທຸກໆສິ່ງ ທີ່ມີຊີວິດ ເພິ່ນໄດ້ທຳ-

ລາຍຈົນໝົດກ້ຽງ ຕາມທີ່ພຣະຜູ້ເປັນເຈົ້າ ພຣະເຈົ້າແຫ່ງພວກອິສຣາເອນໄດ້ສັ່ງໄວ້
[40]ໂຢຊວຍຕີດິນແດນນັ້ນໃຫ້ຜາບແພ້ໄປໝົດຄື ພູດອຍທີ່ເນເກັບ ຢູ່ດອຍເຊເຟລາ ແລະຢູ່
ລາດພູ ລວມທັງເຈົ້າເມືອງທັງໝົດຂອງເມືອງເຫລົ່ານັ້ນ ໂດຍບໍ່ໃຫ້ເຫລືອຈັກຄົນດຽວ ແຕ່ໄດ້
ທຳລາຍທຸກສິ່ງທີ່ຫາຍໃຈ ດັ່ງທີ່ພຣະຜູ້ເປັນເຈົ້າ ພຣະເຈົ້າຂອງຊາວອິສຣາເອນໄດ້ຊົງສັ່ງໄວ້
[41]ໂຢຊວຍໄດ້ໂຈມຕີຊະນະຕັ້ງແຕ່ກາເດັດບາກເນອາຈົນຮອດຄາຊາ ແລະແຂວງໂກເຊັນທັງ
ໝົດຮອດກິເບໂອນ [42]ໂຢຊວຍໄດ້ຈັບກະສັດເຫລົ່ານີ້ ແລະຍຶດເອົາແຜ່ນດິນຂອງພວກເຂົາໃນ
ເວລາດຽວກັນ ເຫດວ່າພຣະຜູ້ເປັນເຈົ້າ ພຣະເຈົ້າແຫ່ງອິສຣາເອນໄດ້ສູ້ຮົບຢູ່ຝ່າຍອິສຣາເອນ
[43]ໂຢຊວຍ ແລະບັນດາອິສຣາເອນໄດ້ພາກັນກັບໄປຢູ່ຄ້າຍພັກທີ່ກິນການ

# ບົດທີ 11

## ໂຢຊວຍຜາບແພ້ຢາບິນກັບພັນທະມິດ

[1]ຢູ່ຕໍ່ມາ ເມື່ອຢາບິນກະສັດເມືອງຮາໂຊ ໄດ້ຍິນຂ່າວກ່ຽວກັບເຫດການຕ່າງໆຂອງຊາວອິ-
ສຣາເອນ ເພິ່ນໄດ້ໃຊ້ຄົນໄປຫາໂຢບັບກະສັດເມືອງມາໂດນ ກະສັດເມືອງຊິມໂຣນ ແລະກະ-
ສັດເມືອງອັກຊາບ [2]ແລະກະສັດທັງຫລາຍທີ່ຢູ່ເທິງພູທາງທິດເໜືອ ແລະທົ່ງພຽງທາງທິດໃຕ້
ຄິນເນໂຣດ[ກ] ຢູ່ທົ່ງພຽງ ແລະຢູ່ເທິງພູນ້ອຍໂດເຣທາງທິດຕາເວັນຕົກ [3]ອອກໄປຫາຊາວກາ-
ນາອານທາງທິດຕາເວັນອອກ ແລະທິດຕາເວັນຕົກ, ຊາວອະໂມຣິດ, ຊາວຮິດຕີ, ຊາວເປຣີຊີ
ແລະຊາວເຢບຸດໃນດິນແດນມິດຊະປາ [4]ພວກເຂົາພ້ອມກັບກອງທັບທັງໝົດໄດ້ທ້ອນໂຮມເຂົ້າ-
ກັນເປັນຝູງຊົນຈຳນວນຫລວງຫລາຍຄືກັບເມັດດິນຊາຍຢູ່ແຄມທະເລ ຊຶ່ງລວມມີທັງມ້າ ແລະລົດ
ຮົບຫລາຍຄັນ [5]ກະສັດເຫລົ່ານີ້ໄດ້ກຳນົດການນັດໝາຍໄວ້ ແລະທ້ອນໂຮມກຳລັງຕັ້ງຄ້າຍພັກຢູ່
ໃກ້ກັບຫ້ວຍເພື່ອຕໍ່ສູ້ຊາວອິສຣາເອນ

[6]ພຣະຜູ້ເປັນເຈົ້າໄດ້ກ່າວແກ່ໂຢຊວຍວ່າ “ຢ່າຊູ່ຢ້ານພວກເຂົາ ເພາະວ່າມື້ອື່ນເວລາດຽວກັນ
ນີ້ ເຮົາຈະມອບພວກເຂົາທັງໝົດທີ່ຖືກຂ້າແລ້ວໄວ້ຕໍ່ໜ້າຊາວອິສຣາເອນ ເຈົ້າຈົ່ງປາດເອັນນອງ
ມ້າທັງໝົດ ແລະຈູດລົດຮົບທັງໝົດຂອງພວກເຂົາ [7]ໂຢຊວຍ ແລະບັນດາທະຫານໄດ້ພາກັນໄປ
ສູ້ຮົບພວກເຂົາຢູ່ໃກ້ຫ້ວຍນໍ້າເມໂຣມ ໃນເວລາທີ່ພວກເຂົາບໍ່ທັນຕັ້ງຕົວ, ພວກອິສຣາເອນໄດ້
ບຸກໂຈມຕີພວກເຂົາໂດຍໄວ [8]ພຣະຜູ້ເປັນເຈົ້າໄດ້ມອບພວກເຂົາໄວ້ໃນກຳມືຂອງພວກອິສຣາ-
ເອນ ແລະພວກອິສຣາເອນໄດ້ໂຈມຕີຊະນະໂດຍໄລ່ຕິດຕາມພວກເຂົາຈົນຮອດເມືອງໃຫຍ່ຊີ-
ໂດນ, ມີສະເຣໂຟດ-ມາຢິມ, ຈົນຮອດຮ່ອມພູມິດຊະປາທາງທິດຕາເວັນອອກ ແລະໄດ້ຂ້າພວກ
ເຂົາບໍ່ໃຫ້ເຫລືອຈັກຄົນ [9]ໂຢຊວຍໄດ້ທຳລາຍພວກເຂົາຕາມທີ່ພຣະຜູ້ເປັນເຈົ້າໄດ້ບອກເພິ່ນ,
ເພິ່ນໄດ້ປາດເອັນນອງມ້າ ແລະຈູດລົດຮົບທັງໝົດຂອງພວກເຂົາ

[10]ໃນເວລານັ້ນ ໂຢຊວຍໄດ້ຕ່າວກັບຄືນມາ ແລະໄດ້ຕີເອົາເມືອງຮາໂຊພ້ອມທັງໄດ້ຂ້າກະສັດ
ເມືອງນັ້ນດ້ວຍຄົມດາບ ເພາະວ່າແຕ່ກ່ອນເມືອງຮາໂຊເປັນມະຫານະຄອນຂອງປະເທດທັງໝົດ
ທີ່ຢູ່ບ່ອນນັ້ນ [11]ພວກເຂົາໄດ້ໂຈມຕີຄົນທັງຫລາຍທີ່ຢູ່ໃນເມືອງນັ້ນ ແລະບັນດາປະເທດທັງ-

[ກ]ກິນເນເຣດແມ່ນທະເລສາບຄາລີເລ

ຫລາຍເຫລົ່ານັ້ນດ້ວຍຄົມດາບ ທັງໄດ້ຂ້າທຸກໆສິ່ງທີ່ມີຊີວິດໂດຍບໍ່ໃຫ້ເຫລືອຈັກສິ່ງໃດແລະໄດ້
ຈູດໄຟເຜົາເມືອງຮາໂຊ

12ໂຢຊວຍໄດ້ຍຶດເມືອງທັງໝົດຂອງບັນດາກະສັດເຫລົ່ານັ້ນ ແລະຕີຊະນະພວກເຂົາດ້ວຍຄົມ
ດາບ ເພິ່ນໄດ້ທຳລາຍພວກເຂົາໃຫ້ດັບສູນຕາມທີ່ໂມເຊຜູ້ຮັບໃຊ້ຂອງພຣະຜູ້ເປັນເຈົ້າໄດ້ສັ່ງໄວ້
ແລ້ວ 13ແຕ່ບັນດາເມືອງທັງຫລາຍທີ່ຢູ່ຢ່າງສະຫງົບເທິງພູນ້ອຍ ຊາວອິສຣາເອນບໍ່ໄດ້ຈູດຈັກ
ເມືອງ ເວັ້ນແຕ່ເມືອງຮາໂຊເມືອງດຽວທີ່ໂຢຊວຍໄດ້ຈູດ 14ພວກລູກຫລານອິສຣາເອນໄດ້ປຸ້ນ
ເອົາສິ່ງຂອງທັງໝົດພ້ອມທັງບັນດາລົດຈາກເມືອງຕ່າງໆມາເປັນຂອງພວກເຂົາ ແລະໄດ້ຂ້າຄົນ
ທັງໝົດດ້ວຍດາບຈົນໝົດກ້ຽງບໍ່ໃຫ້ເຫລືອຈັກສິ່ງທີ່ມີຊີວິດຢູ່ 15ພຣະຜູ້ເປັນເຈົ້າໄດ້ສັ່ງໂມເຊຜູ້ຮັບ
ໃຊ້ຂອງພຣະອົງຢ່າງໃດ ພຣະອົງກໍໄດ້ສັ່ງແກ່ໂຢຊວຍຢ່າງນັ້ນ ແລະໂຢຊວຍໄດ້ປະຕິບັດຕາມ
ພຣະຄຳທີ່ພຣະຜູ້ເປັນເຈົ້າໄດ້ສັ່ງແກ່ໂມເຊໄວ້ທຸກຢ່າງ ໂຢຊວຍບໍ່ໄດ້ລືມຈັກຂໍ້

16ໂຢຊວຍໄດ້ຍຶດດິນແດນທັງໝົດຄື: ພູ, ດິນແດນໂກເຊັນທາງທິດໃຕ້ທັງໝົດ, ທົ່ງພຽງອາ-
ຣາບາ, ພູອິສຣາເອນ ແລະທົ່ງພຽງທີ່ຢູ່ໃນແຖບນັ້ນ 17ຕັ້ງແຕ່ພູຮາລັກຂຶ້ນໄປຫາເສອີຈົນໄປ
ຮອດບາອານ-ກາດໃນຮ່ອມເລບານອນຊຶ່ງຢູ່ຕີນພູເຮີໂມນ ເພິ່ນໄດ້ຈັບບັນດາກະສັດຂອງພວກ
ເຂົາ ແລະໄດ້ຂ້າພວກເຂົາ 18ໂຢຊວຍໄດ້ເຮັດເສິກເປັນເວລາດົນນານຕໍ່ສູ້ກັບບັນດາກະສັດ
ເຫລົ່ານັ້ນ 19ບໍ່ມີເມືອງໃດທີ່ເຮັດສັນຍາສັນຕິພາບກັບພວກລູກຫລານອິສຣາເອນ ຍົກເວັ້ນແຕ່
ຊາວຮີວີທີ່ຢູ່ໃນເມືອງກິເບໂອນ, ຊາວອິສຣາເອນໄດ້ຍຶດເອົາເມືອງທັງຫລາຍນັ້ນດ້ວຍການສູ້
ຮົບ 20ເພາະວ່າພຣະຜູ້ເປັນເຈົ້າໄດ້ໃຫ້ໃຈຂອງພວກເຂົາແຂງກະດ້າງໄປ ດັ່ງນັ້ນ ພວກເຂົາຈຶ່ງ
ຢາກເຮັດເສິກຕໍ່ສູ້ພວກອິສຣາເອນ ເພື່ອພວກອິສຣາເອນຈະໄດ້ທຳລາຍພວກເຂົາໂດຍປາດສະ
ຈາກຄວາມສົງສານ, ເພື່ອໃຫ້ພວກເຂົາຈິບຫາຍໄປໝົດຕາມທີ່ພຣະຜູ້ເປັນເຈົ້າໄດ້ສັ່ງແກ່ໂມເຊ
ໄວ້

21ໃນເວລານັ້ນໂຢຊວຍໄດ້ອອກໄປທຳລາຍອານາກິມທີ່ຢູ່ຕາມເນີນພູ ແລະຕາມເມືອງຕ່າງໆ
ເມືອງເຮັບໂຣນ, ເມືອງເດບີ, ເມືອງອານາບ ແລະຢູ່ຕາມພູດອຍຢູດາ, ພູອິສຣາເອນທົ່ວໄປ
ໂຢຊວຍໄດ້ທຳລາຍພວກເຂົາພ້ອມກັບບັນດາຫົວເມືອງຕ່າງໆຂອງພວກເຂົາຈົນໝົດກ້ຽງ 22ສຳ-
ລັບຊາວອານາກິມບໍ່ເຫລືອຈັກຄົນໃນແຜ່ນດິນຂອງພວກລູກຫລານອິສຣາເອນ ສ່ວນພວກທີ່ຍັງ
ເຫລືອຢູ່ແມ່ນຄົນທີ່ໄດ້ອາໃສຢູ່ໃນເມືອງຄາຊາ, ເມືອງກັດ ແລະໃນເມືອງອາຊະໂດດເທົ່ານັ້ນ
23ໂຢຊວຍໄດ້ຍຶດເອົາດິນແດນທັງໝົດຕາມຖ້ອຍຄຳທີ່ພຣະຜູ້ເປັນເຈົ້າໄດ້ບອກໄວ້ແກ່ໂມເຊ
ແລະໂຢຊວຍໄດ້ມອບແຜ່ນດິນນັ້ນໃຫ້ເປັນມໍລະດົກແກ່ຊາວອິສຣາເອນໂດຍແບ່ງປັນເປັນສ່ວນ
ຕາມເຜົ່າຕ່າງໆ ແລະດິນແດນກໍມີຄວາມສະຫງົບສຸກພົ້ນຈາກສົງຄາມ

# ບົດທີ 12

## ບັນດາກະສັດທີ່ໂມເຊຮົບຊະນະ

1ບັນດາກະສັດໃນແຕ່ລະປະເທດທີ່ພວກລູກຫລານອິສຣາເອນໄດ້ສູ້ຮົບຊະນະ ແລະຍຶດເອົາ
ດິນແດນຢູ່ແມ່ນ້ຳຢໍແດນທາງທິດຕາເວັນອອກ ຕັ້ງແຕ່ນ້ຳຫ້ວຍອາໂນນຈົນຮອດພູເຮີໂມນ

ແລະທົ່ງພຽງທາງທິດຕາເວັນອອກມີຄືດັ່ງນີ້
2ເຈົ້າ ສີໂຮນ ກະສັດຊາວ ອະໂມຣິດ ທີ່ຢູ່ ເມືອງ ເຮັດຊະໂບນ ຊຶ່ງ ໄດ້ປົກຄອງຕັ້ງແຕ່ ອາໂຣເອ
ແຄມ ແມ່ນໍ້າ ອາໂນນ, ຈາກ ໃຈກາງ ຂອງ ແມ່ນໍ້າ ແລະ ຈາກ ເຄິ່ງໜຶ່ງ ກີເລອາດ ຈົນຮອດ ແມ່ນໍ້າ
ຢັບໂບກ ທີ່ເປັນ ເຂດແດນ ຂອງພວກລູກຫລານ ອຳໂມນ 3ແຖບທົ່ງພຽງ ອາຣາບາ ຈົນຮອດນໍ້າທະ-
ເລ ຄິນເນໂຣດ ທາງທິດຕາເວັນອອກຈົນໄປຮອດນໍ້າທະເລ, ທົ່ງພຽງ, ໄປຮອດທະເລເຄັມທາງ
ທິດຕາເວັນອອກໄປສູ່ ເບັດ-ເຢຊີໂມດ ແລະຈາກທາງທິດໃຕ້ຕາມເນີນພູປີຊະກາ
4ແຂວງຂອງ ໂອກ ກະສັດ ເມືອງ ບາຊານ ທີ່ເຫລືອຈາກຊາວ ເຣຟາຍິມ ຊຶ່ງອາໃສຢູ່ ເມືອງ ອັດ-
ຊະຕະໂຣດ ແລະ ໃນ ເມືອງ ເອັດເຣອີ 5ກະສັດນີ້ໄດ້ປົກຄອງພູ ເຮີໂມນ ກັບ ສາເລກາ ພ້ອມທັງ
ທົ່ວ ແຂວງ ບາຊານ ຈົນ ຮອດ ເຂດ ແດນ ຂອງຊາວ ເກຊູ ແລະ ຊາວ ມາອາກາ ກັບ ເຄິ່ງໜຶ່ງ ຂອງ
ແຂວງ ກີເລອາດ ຈົນຮອດເຂດແດນ ສີໂຮນ ກະສັດ ເມືອງ ເຮັດຊະໂບນ
6ໂມເຊ ຜູ້ຮັບ ໃຊ້ ຂອງ ພຣະຜູ້ເປັນເຈົ້າ ກັບ ພວກ ລູກ ຫລານ ອິສຣາເອນ ໄດ້ ໂຈມຕີຊະນະ ພວກ
ເຂົາ ແລະ ໄດ້ມອບດິນແດນ ເຫລົ່ານັ້ນ ໃຫ້ເປັນຂອງຊາວ ຣູເບັນ ແລະ ຊາວ ຄາດ ແລະ ເຄິ່ງໜຶ່ງ
ຂອງ ເຜົ່າ ມານາເຊ
7ບັນດາກະສັດ ໃນ ແຕ່ລະປະເທດທີ່ ໂຢຊວຍ ແລະພວກລູກຫລານ ອິສຣາເອນ ໄດ້ ໂຈມຕີຊະ-
ນະ ແມ່ນຢູ່ທີ່ແມ່ນໍ້າ ຢໍແດນ ຟາກນີ້ທາງທິດຕາເວັນຕົກ ຕັ້ງແຕ່ ບາອານ-ກາດ ໃນຮ່ອມພູ ເລບາ-
ນອນ ຈົນຮອດພູ ຮາລັກ ຂຶ້ນໄປສູ່ ເສອີ; ໂຢຊວຍ ໄດ້ ແບ່ງປັນດິນແດນນີ້ ໃຫ້ເປັນກຳມະສິດຂອງ
ບັນດາເຜົ່າ ຂອງ ຊົນ ຊາດ ອິສຣາເອນ ໂດຍ ໄດ້ ແບ່ງປັນ ເປັນ ສ່ວນ ຕາມ ເຜົ່າ ຕ່າງໆ ຂອງ ພວກ ເຂົາ
8ຢູ່ ເທິງພູ, ຢູ່ຕາມຮ່ອມພູ, ຢູ່ຕາມທົ່ງພຽງ, ຕາມເນີນພູທັງຫລາຍ, ປ່າ ແລະປະເທດທາງທິດ-
ໃຕ້; ຊາວ ຮິດຕີ, ຊາວ ອະໂມຣິດ, ຊາວ ການາອານ, ຊາວ ເປຣິຊີ, ຊາວ ຮີວີ ແລະຊາວ ເຢບຸດ
ເປັນດັ່ງນີ້: 9ກະສັດ ເມືອງ ເຢຣິໂກ, ກະສັດ ເມືອງ ອາອີ ທີ່ຢູ່ຂ້າງ ເມືອງ ເບັດເອນ, 10ກະສັດ ເມືອງ
ເຢຣູຊາເລັມ, ກະສັດ ເມືອງ ເຮັບໂຣນ, 11ກະສັດ ເມືອງ ຢາຣະມຸດ, ກະສັດ ເມືອງ ລາກິດ, 12ກະ-
ສັດ ເມືອງ ເອັກໂລນ, ກະສັດ ເມືອງ ເກເຊ, 13ກະສັດ ເມືອງ ເດບີ, ກະສັດ ເມືອງ ເກເດ, 14ກະສັດ
ເມືອງ ໂຮມາ, ກະສັດ ເມືອງ ອາຣັດ, 15ກະສັດ ເມືອງ ລິບນາ, ກະສັດ ເມືອງ ອະດຸລາມ, 16ກະສັດ
ເມືອງ ມັກເກດາ, ກະສັດ ເມືອງ ເບັດເອນ, 17ກະສັດ ເມືອງ ຕັບປົວ, ກະສັດ ເມືອງ ເຮເຟ, 18ກະ-
ສັດ ເມືອງ ອາເຟັກ, ກະສັດ ເມືອງ ລັດຊາໂຣນ, 19ກະສັດ ເມືອງ ມາໂດນ, ກະສັດ ເມືອງ ຮາໂຊ,
20ກະສັດ ເມືອງ ຊິມໂຣນ, ກະສັດ ເມືອງ ອັກຊາບ, 21ກະສັດ ເມືອງ ຕາອານັກ, ກະສັດ ເມືອງ ເມ-
ກິດໂດ, 22ກະສັດ ເມືອງ ເກເດັດ, ກະສັດ ເມືອງ ໂຢກເນອາມ ຢູ່ທີ່ພູ ກາເມນ, 23ກະສັດ ເມືອງ ໂດ-
ເຣ ຢູ່ທີ່ພູນ້ອຍ ໂດເຣ, 24ກະສັດ ເມືອງ ໂກຢິມ ທີ່ ກິນການ, ກະສັດ ເມືອງ ຕີຣະຊາ.
ກະສັດລວມທັງໝົດມີສາມສິບເອັດອົງ.

# ບົດທີ 13

## ດິນແດນທີ່ຍັງຈະຕ້ອງຍຶດຄອງເອົາ

1ໂຢຊວຍ ເຖົ້າແກ່ແລ້ວ ແລະມີອາຍຸສູງຫລາຍ ພຣະຜູ້ເປັນເຈົ້າ ໄດ້ກ່າວແກ່ເພິ່ນວ່າ “ເຈົ້າເຖົ້າ

ແກ່ແລ້ວ ອາຍຸກໍສູງຫລາຍ ແລະຍັງມີແຜ່ນດິນເປັນຈຳນວນຫລວງຫລາຍທີ່ຈະຕ້ອງຍຶດເອົາ"
2ແຜ່ນດິນທີ່ຍັງເຫລືອຢູ່ມີດັ່ງນີ້: ດິນແດນທັງໝົດຂອງຊາວ ຟີລິດສະຕິນ ແລະຊາວ ເກຊູ. 3ຕັ້ງ-
ແຕ່ແມ່ນ້ຳຊີໂຮ ທີ່ໄຫລຜ່ານທາງໜ້າ ເອຢິບ ໄປຈົນຮອດເຂດແດນ ເມືອງ ເອັກໂຣນ ທາງທິດເໜືອ
ຊຶ່ງ ແຜ່ນດິນນັ້ນ ເປັນຂອງຊາວ ການາອານ ຄື ເຈົ້ານາຍຊາວ ຟີລິດສະຕິນ ຫ້າຄົນຄື ເຈົ້າເມືອງ
ຄາຊາ, ເຈົ້າເມືອງ ອາຊະໂດດ, ເຈົ້າເມືອງ ອາຊະກາໂລນ, ເຈົ້າເມືອງ ກິດຕີ, ເຈົ້າເມືອງ ເອັກ-
ໂຣນ ແລະຊາວ ອາວາ. 4ຈາກແຜ່ນດິນທາງທິດໃຕ້ທັງໝົດຂອງຊາວ ການາອານ ແລະ ເມືອງ
ເມອາຣາ ທີ່ເປັນຂອງຊາວຊີໂດນ ຈົນຮອດ ເມືອງ ອາເຟັກ ຈົນຮອດເຂດແດນຂອງຊາວ ອະໂມ-
ຣິດ. 5ແລະແຜ່ນດິນຊາວ ເກບານ ແລະພູ ເລບານອນ ທັງໝົດ; ຕັ້ງແຕ່ພູ ເລບານອນ ຈົນຮອດ
ທາງທິດຕາເວັນອອກ, ຈາກ ບາອານ-ກາດ ຢູ່ທີ່ຕີນພູ ເຮີໂມນ ຈົນຮອດບ່ອນເຂົ້າໄປ ຮາມັດ.
6ບັນດາຊາວພູເຂົາທັງໝົດຈາກພູ ເລບານອນ ຈົນຮອດ ມີສະເຣໂຟດ-ມາຢິມ ແລະຊາວເມືອງຊີ-
ໂດນ ທັງໝົດ; ຝ່າຍເຮົາຈະຂັບໄລ່ພວກເຂົາໃຫ້ໜີຕໍ່ໜ້າລູກຫລານ ອິສຣາເອນ; ຈົ່ງຈັບສະຫລາກ
ແບ່ງປັນດິນແດນ ເຫລົ່ານີ້ໃຫ້ເປັນມໍລະດົກແກ່ຊົນຊາດ ອິສຣາເອນ ຕາມທີ່ເຮົາໄດ້ບອກເຈົ້າແລ້ວ.
7ແລະບັດນີ້ ຈົ່ງແບ່ງປັນດິນແດນເຫລົ່ານີ້ໃຫ້ເປັນມໍລະດົກແກ່ເກົ້າເຜົ່າ ແລະເຄິ່ງເຜົ່າ ມານາເຊ.

## ໂຢຊວຍແບ່ງປັນເຂດແດນທາງທິດຕາເວັນອອກຂອງແມ່ນ້ຳຢໍແດນ

8ເຄິ່ງໜຶ່ງຂອງ ເຜົ່າ ມານາເຊ ທີ່ຍັງ ເຫລືອ ແລະຊາວ ຣູເບັນ ຊາວ ຄາດ ໄດ້ຮັບມໍລະດົກແລ້ວ
ຊຶ່ງ ໂມເຊ ໄດ້ແບ່ງປັນ ໃຫ້ພວກເຂົາຢູ່ທີ່ແມ່ນ້ຳ ຢໍແດນ ຟາກເບື້ອງນັ້ນທາງທິດຕາເວັນອອກ (ຕາມ
ທີ່ທ່ານ ໂມເຊ ຜູ້ຮັບໃຊ້ຂອງ ພຣະຜູ້ເປັນເຈົ້າ ໄດ້ມອບ ໃຫ້ພວກເຂົາ). 9ຕັ້ງແຕ່ເມືອງ ອາໂຣເອ ທີ່ຢູ່
ແຄມແມ່ນ້ຳ ອາໂນນ ແລະ ເມືອງທີ່ຢູ່ໃຈກາງ ແມ່ນ້ຳ, ແລະທົ່ງພຽງ ເມເດບາ ທັງໝົດຈົນຮອດ
ເມືອງ ດີໂບນ. 10ບັນດາ ເມືອງທັງ ໝົດ ຂອງ ສີໂຮນ ກະສັດຊາວ ອະໂມຣິດ ທີ່ ໄດ້ປົກຄອງ ເມືອງ
ເຮັດຊະໂບນ ຈົນຮອດເຂດແດນພວກລູກຫລານ ອຳໂມນ ແລະແຂວງ ກິເລອາດ. 11ຮ່ວມທັງເຂດ
ແດນພວກຊາວ ເກຊູ ແລະຊາວ ມາອາກາ ແລະພູ ເຮີໂມນ ທັງໝົດ, ແຂວງ ບາຊານ ທັງໝົດຈົນ
ຮອດ ສາເລກາ. 12ບັນດາອານາຈັກຂອງ ໂອກ ໃນແຂວງ ບາຊານ ທີ່ໄດ້ປົກຄອງເມືອງ ອັດຊະຕະ-
ໂຣດ ກັບເມືອງ ເອັດເຣອີ (ເພິ່ນເປັນຄົນເຜົ່າ ເຣຟາຢິມ ຊຶ່ງເປັນຜູ້ດຽວທີ່ຍັງເຫລືອຢູ່) ບັນດາເມືອງ
ເຫລົ່ານີ້ ໂມເຊ ໄດ້ໂຈມຕີຊະນະ ແລະຂັບໄລ່ໃຫ້ພວກເຂົາໜີໄປ. 13ແຕ່ວ່າພວກລູກຫລານ ອິ-
ສຣາເອນບໍ່ໄດ້ໄລ່ພວກຊາວ ເກຊູ, ຊາວ ມາອາກາ, ຊາວ ເກຊູ ແລະຊາວ ມາອາກາ ໜີແຕ່ພວກ
ເຂົາໄດ້ດຳລົງຊີວິດຢູ່ທ່າມກາງຊາວ ອິສຣາເອນ ຈົນ ເຖິງທຸກມື້ນີ້. 14ເພິ່ນບໍ່ໄດ້ແບ່ງປັນດິນແດນທີ່
ເປັນ ມໍລະດົກ ໃຫ້ ແກ່ ເຜົ່າ ເລວີ ເນື່ອງ ຈາກ ເຄື່ອງ ເຜົາ ຖວາຍ ບູຊາ ແດ່ ພຣະຜູ້ເປັນເຈົ້າ ພຣະເຈົ້າ
ຂອງ ຊາວ ອິສຣາເອນ ເປັນ ມໍລະດົກ ຂອງ ເຜົ່າ ເລວີ ຕາມ ທີ່ ພຣະອົງ ໄດ້ ບອກ ພວກ ເຂົາ ໄວ້ ກ່ອນ
ແລ້ວ.

## ເຂດແດນທີ່ໂມເຊມອບໝາຍໃຫ້ເຜົ່າຣູເບັນ

15ແລະ ໂມເຊ ໄດ້ ມອບ ສ່ວນ ໜຶ່ງ ໃຫ້ ແກ່ ລູກ ຫລານ ເຜົ່າ ຣູເບັນ ຕາມ ເຊື້ອສາຍ ຂອງ ພວກ ເຂົາ.
16ດິນແດນຂອງພວກເຂົາເລີ້ມຕັ້ງແຕ່ເມືອງ ອາໂຣເອ ແຄມແມ່ນ້ຳ ອາໂນນ ແລະເມືອງທີ່ຢູ່ອ້ອມ-
ແອ້ມແມ່ນ້ຳພ້ອມທັງທົ່ງພຽງທັງໝົດທີ່ຢູ່ໃກ້ກັບ ເມເດບາ. 17ເມືອງ ເຮັດຊະໂບນ ແລະເມືອງທັງ

ໝົດທີ່ຢູ່ທົ່ງພຽງ. [18]ຄື ເມືອງ ດີໂບນ, ເມືອງ ບາໂມດ-ບາອານ, ເມືອງ ເບັດ-ບາອານ-ເມໂອນ
ແລະ ເມືອງ ຢາຮາດ [19]ແລະ ເມືອງ ເກເດໂມດ, ເມືອງ ເມຟະອາດ, ເມືອງ ກີຣິອາດທາຢິມ,
ເມືອງ ສິບມາ ແລະເມືອງ ເຊເຣັດ-ຊາຮາທີ່ຢູ່ຕາມຮ່ອມພູ. [20]ແລະເມືອງ ເບັດ-ເປໂອ ແລະເນີນພູ
ປີຊະກາ, ເມືອງ ເບັດ-ເຢຊີໂມດ. [21]ເມືອງທັງຫລາຍທີ່ຢູ່ທົ່ງພຽງ ແລະບັນດານະຄອນ ສີໂຮນ,
ກະສັດພວກ ອະໂມຣິດ ທີ່ໄດ້ປົກຄອງ ເມືອງ ເຮັດຊະໂບນ ຊຶ່ງ ໂມເຊ ໄດ້ຕີຊະນະຮ່ວມທັງກະສັດ
ແລະພວກເຈົ້ານາຍ ມີດີອານ ຄື: ເອວີ, ເຣເກັມ, ຊູເຣ, ຮູເຣ ແລະ ເຣບາຜູ້ນຳຂອງປະຊາຊົນ
ໃນດິນແດນນັ້ນ [22]ພວກລູກຫລານ ອິສຣາເອນ ໄດ້ເອົາດາບຂ້າ ບາລາອາມ ລູກຊາຍ ເບໂອຜູ້ເປັນ
ໝໍທຳນວາຍພ້ອມກັບຄົນອື່ນໆທີ່ໄດ້ຖືກຂ້າ. [23]ເຂດແດນຂອງລູກຫລານ ຣູເບັນ ແມ່ນແມ່ນ້ຳຢໍ-
ແດນ ແລະຕາມແຄມແມ່ນ້ຳນັ້ນ; ສ່ວນດິນທີ່ເປັນມໍລະດົກຂອງລູກຫລານ ຣູເບັນ ຕາມເຊື້ອສາຍ
ຂອງພວກເຂົາກໍເປັນດັ່ງນັ້ນ ເມືອງທັງຫລາຍກັບບັນດາຊົນນະບົດຂອງເມືອງນັ້ນ.
[24]ໂມເຊ ໄດ້ແບ່ງສ່ວນໜຶ່ງໃຫ້ແກ່ເຜົ່າ ຄາດ ແກ່ລູກຫລານ ຄາດ ຕາມເຊື້ອສາຍຂອງພວກເຂົາ.

## ເຂດແດນທີ່ໄດ້ມອບໝາຍໃຫ້ແກ່ເຜົ່າຄາດ

[25]ດິນແດນຂອງ ເຜົ່າ ຄາດ ແມ່ນເມືອງ ຢາເຊ ແລະ ເມືອງທັງໝົດ ໃນ ແຂວງ ກີເລອາດ ແລະ
ເຄິ່ງໜຶ່ງຂອງດິນແດນພວກລູກຫລານ ອຳໂມນ ຈົນຮອດເມືອງ ອາໂຣເອ ທີ່ຢູ່ທາງທິດຕາເວັນອອກ
ຂອງ ເມືອງ ຣັບບາ [26]ແລະຕັ້ງແຕ່ເມືອງ ເຮັດຊະໂບນ ຈົນຮອດ ຣາມາດ-ມິດຊະເປ ແລະ ເມືອງ
ເບໂຕນີມ ຈາກເມືອງ ມາຮານາຢິມ ຈົນຮອດເຂດແດນ ເດບີ [27]ຢູ່ຕາມຮ່ອມພູ, ເມືອງ ເບັດ-ອາ-
ຣາມ, ເມືອງ ເບັດ-ນິມຣາ ເມືອງສຸກໂກດ ແລະເມືອງຊາໂຟນ ແລະສ່ວນທີ່ເຫລືອຂອງອານາ-
ຈັກ ສີໂຮນ ກະສັດເມືອງ ເຮັດຊະໂບນ, ແມ່ນ້ຳຢໍແດນ ແລະຕາມແຄມແມ່ນ້ຳນັ້ນ ຈົນສຸດນ້ຳທະ-
ເລ ກິນເນເຣດ ແລະກາຍແມ່ນ້ຳຢໍແດນ ໄປທາງທິດຕາເວັນອອກ [28]ສ່ວນດິນແດນທີ່ເປັນມໍລະ-
ດົກຂອງລູກຫລານ ຄາດ ຕາມເຊື້ອສາຍຂອງພວກເຂົາກໍເປັນດັ່ງນັ້ນ ມີບັນດາເມືອງແລະຊົນນະ-
ບົດຂອງບັນດາເມືອງນັ້ນ

## ເຂດແດນທີ່ໄດ້ມອບໝາຍໃຫ້ເຜົ່າມານາເຊຕາເວັນອອກ

[29]ໂມເຊ ໄດ້ມອບສ່ວນໜຶ່ງໃຫ້ແກ່ເຄິ່ງໜຶ່ງຂອງເຜົ່າ ມານາເຊ ໃຫ້ແກ່ລູກຫລານ ມານາເຊຕາມ
ຄອບຄົວຂອງພວກ ເຂົາ [30]ເຂດແດນຂອງພວກເຂົາເລີ່ມຕັ້ງແຕ່ເມືອງ ມາຮານາຢິມ ແຂວງ ບາ-
ຊານ ທັງໝົດນະຄອນ ໂອກ ກະສັດ ບາຊານ ທັງໝົດ ກັບເມືອງທັງໝົດຂອງ ຢາອີ ທີ່ຢູ່ໃນແຂວງ
ບາຊານ ຊຶ່ງມີຫົກສິບ ຕົວ ເມືອງ [31]ທັງ ເຄິ່ງໜຶ່ງ ຂອງ ແຂວງ ກີເລອາດ, ເມືອງ ອັດຊະຕະໂຣດ,
ເມືອງ ເອັດເຣອີ ຊຶ່ງ ເປັນ ເມືອງທີ່ຢູ່ ໃນອານາຈັກ ໂອກ ຂອງ ແຂວງ ບາຊານ ແລະ ເປັນສ່ວນ ແບ່ງ
ຂອງລູກຫລານ ມາກີ ຊຶ່ງເປັນລູກຊາຍຂອງ ມານາເຊ ໂດຍແບ່ງປັນເປັນສ່ວນໃຫ້ລູກຫລານ ມາກີ
ເຄິ່ງໜຶ່ງຕາມຄອບຄົວຂອງພວກເຂົາ

[32]ແຜ່ນດິນທີ່ ໂມເຊ ໄດ້ແບ່ງປັນໃຫ້ເປັນມໍລະດົກນັ້ນ ແມ່ນຢູ່ໃນທົ່ງພຽງ ໂມອາບ ທີ່ຢູ່ເຂດແມ່-
ນ້ຳຢໍແດນ ຟາກພຸ້ນ ທາງທິດຕາເວັນອອກຂອງ ເມືອງ ເຢຣິໂກ [33]ແຕ່ ໂມເຊບໍ່ໄດ້ມອບດິນທີ່ເປັນ
ມໍລະດົກໃຫ້ແກ່ເຜົ່າ ເລວີ; ເພາະ ພຣະຜູ້ເປັນເຈົ້າ ພຣະເຈົ້າຂອງຊາວ ອິສຣາເອນ ເປັນມໍລະດົກ
ຂອງພວກເຂົາຕາມທີ່ພຣະອົງໄດ້ບອກແກ່ພວກເຂົາແລ້ວ

# ບົດທີ 14

## ໂຢຊວຍແບ່ງປັນເຂດແດນທາງທິດຕາເວັນຕົກຂອງແມ່ນ້ຳຢໍແດນ

1ຕໍ່ໄປນີ້ແມ່ນມໍລະດົກທີ່ລູກຫລານ ອິສຣາເອນ ໄດ້ຮັບໃນ ແຜ່ນດິນ ການາອານ ຊຶ່ງປະໂລຫິດ
ເອເລອາຊາ ແລະ ໂຢຊວຍ ລູກຂອງ ນູນ ແລະພວກຜູ້ນຳພ້ອມທັງປູ່ຍ່າຕາຍາຍຂອງລູກຫລານ ອິ-
ສຣາເອນ ໄດ້ແບ່ງປັນໃຫ້ມີດັ່ງນີ້ 2ດິນມໍລະດົກທັງໝົດນັ້ນ ພວກເຂົາໄດ້ແບ່ງປັນກັນໂດຍການ
ຈົກສະຫລາກ ລວມທັງໝົດມີເກົ້າເຜົ່າ ຕາມ ພຣະຜູ້ເປັນເຈົ້າ ໄດ້ສັ່ງໄວ້ໂດຍຜ່ານ ໂມເຊ 3ໂມເຊ
ໄດ້ມອບດິນມໍລະດົກໃຫ້ແກ່ສອງ ເຜົ່າເຄິ່ງ ທີ່ຢູ່ແມ່ນ້ຳຢໍແດນ ຟາກພຸ້ນ ແຕ່ເພິ່ນບໍ່ໄດ້ມອບດິນມໍ-
ລະດົກໃຫ້ແກ່ພວກ ເຜົ່າ ເລວີ 4ເພາະວ່າລູກຫລານ ໂຢເຊັບ ມີສອງ ເຜົ່າຄື: ເຜົ່າ ມານາເຊ ກັບ ເຜົ່າ
ເອຟຣາຢິມ ແຕ່ບໍ່ໄດ້ແບ່ງສ່ວນໃນ ແຜ່ນດິນ ໃຫ້ພວກ ເລວີ ຍົກເວັ້ນ ແຕ່ບາງ ເມືອງທີ່ຢູ່ຮອບໆ
ຂອງ ເມືອງນັ້ນ ເພື່ອ ເປັນບ່ອນລ້ຽງສັດຂອງພວກເຂົາ 5ລູກຫລານ ອິສຣາເອນ ໄດ້ເຮັດຕາມທີ່
ພຣະຜູ້ເປັນເຈົ້າ ໄດ້ສັ່ງໄວ້ກັບ ໂມເຊ ແລະພວກເຂົາໄດ້ເອົາດິນແດນເຫລົ່ານັ້ນແບ່ງປັນກັນ

6ສ່ວນລູກຫລານຂອງ ເຜົ່າ ຢູດາ ໄດ້ພາກັນໄປຫາ ໂຢຊວຍ ທີ່ ກິນການ ແລະ ກາເລັບ ລູກຊາຍ
ຂອງ ເຢຟຸນເນ ຊາວ ເກນິດຊີ ໄດ້ເວົ້າກັບ ເພິ່ນວ່າ “ທ່ານໄດ້ຮູ້ຈັກຖ້ອຍຄຳທີ່ ພຣະຜູ້ເປັນເຈົ້າ ໄດ້
ກ່າວເຖິງຂ້າພະເຈົ້າ ແລະ ເຖິງທ່ານ 7ຜ່ານທາງ ໂມເຊ ຜູ້ເປັນຄົນຂອງ ພຣະຜູ້ເປັນເຈົ້າ ຢູ່ທີ່ ກາ-
ເດັດ ບາກເນອາ ເມື່ອຂ້າພະເຈົ້າມີອາຍຸສີ່ສິບປີ ຂະນະທີ່ ໂມເຊ ຂ້າໃຊ້ຂອງ ພຣະຜູ້ເປັນເຈົ້າ ໄດ້
ໃຊ້ຂ້າພະເຈົ້າໄປ ກາເດັດ ບາກເນອາ ເພື່ອຈະໄດ້ໄປສອດແນມດິນແດນ ແລະຂ້າພະເຈົ້າໄດ້ເລົ່າ
ເລື່ອງໃຫ້ທ່ານຟັງ ຕາມຄວາມຄິດເຫັນຂອງຂ້າພະເຈົ້າ 8ພວກພີ່ນ້ອງທີ່ໄດ້ຂຶ້ນໄປພ້ອມກັນກັບ
ຂ້າພະເຈົ້ານັ້ນ; ຈິດໃຈຂອງພວກເຂົາໄດ້ວຸ້ນວາຍໄປ ແຕ່ວ່າຂ້າພະເຈົ້າໄດ້ຕິດຕາມ ພຣະຜູ້ເປັນ-
ເຈົ້າ ພຣະເຈົ້າ ຂອງຂ້າພະເຈົ້າໄປຢ່າງສຸດໃຈ 9ແລະໃນມື້ນັ້ນ ໂມເຊ ໄດ້ສັນຍາວ່າ “ແຜ່ນດິນທີ່
ຕີນຂອງເຈົ້າໄດ້ໄປຢຽບນັ້ນກໍຈະເປັນດິນມໍລະດົກຂອງເຈົ້າ ແລະຂອງພວກລູກຫລານຂອງເຈົ້າ
ສືບໆໄປ, ເພາະວ່າເຈົ້າໄດ້ຕິດຕາມ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງເຮົາດ້ວຍສຸດໃຈຂອງເຈົ້າ
10ບັດນີ້ ຈົ່ງເບິ່ງໃນສິ່ງທີ່ ພຣະຜູ້ເປັນເຈົ້າ ໄດ້ບອກໄວ້, ພຣະອົງໄດ້ຄຸ້ມຄອງຊີວິດຂອງຂ້າພະເຈົ້າ
ລະຫວ່າງສີ່ສິບຫ້າປີ ຕັ້ງແຕ່ ພຣະຜູ້ເປັນເຈົ້າ ໄດ້ກ່າວຄຳນັ້ນແກ່ ໂມເຊ ເມື່ອພວກ ອິສຣາເອນ ໄດ້
ເດີນທາງໄປມາໃນຖິ່ນແຫ້ງແລ້ງກັນດານ ແລະບັດນີ້ ຈົ່ງເບິ່ງພວກຂ້າພະເຈົ້າໃນມື້ນີ້, ຂ້າພະ-
ເຈົ້າມີອາຍຸແປດສິບຫ້າປີແລ້ວ 11ໃນມື້ນີ້ ຂ້າພະເຈົ້າຍັງມີເຫື່ອແຮງເທົ່າກັບໃນມື້ນັ້ນທີ່ ໂມເຊ ໄດ້
ໃຊ້ຂ້າພະເຈົ້າໄປ, ເຫື່ອແຮງຂອງຂ້າພະເຈົ້າໃນຍາມນັ້ນເປັນຢ່າງໃດ, ເຫື່ອແຮງໃນການຮົບເສິກ
ແລະການເດີນທາງໄປມາດຽວນີ້ກໍເປັນຢ່າງນັ້ນ 12ເຫດສັນນັ້ນ ພູທີ່ ພຣະຜູ້ເປັນເຈົ້າ ໄດ້ກ່າວໃນມື້
ນັ້ນ ເຊີນທ່ານມອບໃຫ້ຂ້າພະເຈົ້າສາ ເພາະວ່າໃນມື້ນັ້ນທ່ານໄດ້ຍິນວ່າພວກ ອານາກິມ ຢູ່ທີ່ນັ້ນ
ແລະມີເມືອງໃຫຍ່ຊຶ່ງມີກຳແພງອ້ອມ ພຣະຜູ້ເປັນເຈົ້າ ຈະສະຖິດຢູ່ຝ່າຍຂ້າພະເຈົ້າ ແລະຈະຂັບ
ໄລ່ພວກເຂົາຕາມທີ່ ພຣະຜູ້ເປັນເຈົ້າ ໄດ້ບອກໄວ້ແລ້ວ” 13ໂຢຊວຍ ໄດ້ອວຍພອນໃຫ້ເພິ່ນ ແລະ
ໄດ້ມອບ ເມືອງ ເຮັບໂຣນ ເປັນດິນມໍລະດົກໃຫ້ແກ່ເພິ່ນຄື ກາເລັບ ລູກຊາຍຂອງ ເຢຟຸນເນ 14ສະ-
ນັ້ນ ເມືອງ ເຮັບໂຣນ ຈຶ່ງ ເປັນດິນມໍລະດົກຂອງ ກາເລັບ ລູກຂອງ ເຢຟຸນເນ ຊາວ ເກນິດຊີ ຈົນ
ເທົ່າທຸກມື້ນີ້ ຍ້ອນເພິ່ນໄດ້ຕິດຕາມ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງຊາວ ອິສຣາເອນ ຢ່າງແທ້ຈິງ

15ອີກອັນໜຶ່ງ ຊື່ເມືອງ ເຮັບໂຣນ ແຕ່ກ່ອນແມ່ນ ກີຣິອາດ-ອາຣະບາ; ອາຣະບາ ເປັນຜູ້ໃຫຍ່ໃນ
ທ່າມກາງພວກອານາກິມ ແລະດິນແດນກໍມີຄວາມສະຫງົບສຸກບໍ່ມີສົງຄາມ

# ບົດທີ 15

## ເຂດແດນທີ່ໄດ້ມອບໝາຍໃຫ້ເຜົ່າຢູດາ

1ດິນແດນຂອງ ເຜົ່າຢູດາ ຕາມເຊື້ອສາຍຂອງພວກເຂົາໄດ້ຕົກຢູ່ໃນເຂດປ່າ[ກ] ຈົນຮອດເຂດ
ແດນ ເອໂດມ ທາງທິດໃຕ້ສຸດ 2ເຂດແດນທາງທິດໃຕ້ຂອງພວກເຂົາ ເລີ່ມຕັ້ງແຕ່ນໍ້າທະເລເຄັມ
ໄປຮອດທິດໃຕ້ສຸດ. 3ແລະອອກໄປທາງທິດໃຕ້ໂດຍຜ່ານຂຶ້ນໄປ ອັກຣັບບິມ ໄປຈົນເຖິງສິນ.
ດິນແດນນີ້ແຕ່ຕອນໃຕ້ແຂວງ ກາເດັດ-ບາເນອາ ຕ້ອງໄດ້ຜ່ານໄປທາງເມືອງ ເຮດຊະໂຣນ, ຂຶ້ນ
ໄປທາງ ອັດດາ, ລ້ຽວໄປທາງ ກາຣະກາ, 4ຜ່ານໄປຫາອາຊະໂມນ ແລະລຽບໄປຕາມແມ່ນໍ້າ ເອ-
ຢິບ ມາຮອດນໍ້າທະເລ; ເຂດແດນຂອງເຜົ່າຢູດາທາງທິດໃຕ້ກໍເປັນຢ່າງນັ້ນ

5ເຂດແດນທາງທິດຕາເວັນອອກແມ່ນ ຈາກນໍ້າທະເລເຄັມຈົນຮອດປາກແມ່ນໍ້າຢໍແດນ ສ່ວນ
ເຂດແດນທາງທິດເໜືອແມ່ນເລີ່ມຈາກປາຍສຸດຂອງນໍ້າທະເລເລີຍໄປຮອດປາກແມ່ນໍ້າຢໍແດນ.
6ແລະເຂດແດນໄດ້ຂຶ້ນໄປສູ່ ເບັດ-ໂຮກລາ ຜ່ານກາຍໄປຕາມທິດເໜືອເມືອງ ເບັດ-ອາຣາບາ ຂຶ້ນ
ໄປສູ່ກ້ອນຫີນ ໂບຮານ ລູກຂອງ ຣູເບັນ 7ແລະເຂດແດນໄດ້ຂຶ້ນໄປຮອດ ເດບີ ຈາກຮ່ອມພູອາໂຄ,
ແລະລ້ຽວ ໄປທາງທິດເໜືອ ຈົນຮອດ ກິນການ ກ່ອນຈະຂຶ້ນໄປ ອະດູມມິມ ທີ່ຢູ່ຟາກທິດໃຕ້ຂອງ
ແມ່ນໍ້າ ເຂດແດນໄດ້ຜ່ານເຂົ້າໄປໃກ້ ແມ່ນໍ້າເອັນ-ເຊເມັດ ຈົນໄປຮອດ ເອັນ-ໂຣເກນ 8ເຂດແດນ
ຂຶ້ນໄປຮອດຮ່ອມພູຮິນໂນມ ໄປທາງທິດໃຕ້ຂອງເມືອງ ເຢບຸດ ຊຶ່ງແມ່ນ ເຢຣູຊາເລັມ ແລະເຂດ
ແດນໄດ້ຂຶ້ນໄປຫາຍອດພູທີ່ຢູ່ຖັດກັບຮ່ອມພູຮິນໂນມທາງທິດຕາເວັນຕົກ ສຸດຢູ່ທີ່ທາງທິດເໜືອ
ຮ່ອມ ເຣຟາຢິມ 9ເຂດແດນໄດ້ໝາຍຕັ້ງແຕ່ຍອດພູຈົນຮອດບໍ່ນໍ້າ ເນັບໂຕອາ ແລະໄດ້ອອກໄປ
ຮອດເມືອງຕ່າງໆທີ່ຢູ່ເທິງພູ ເອຟະໂຣນ ແລະເຂດແດນໄດ້ຖືກໝາຍໄວ້ທາງ ບາອາລາ ຊຶ່ງແມ່ນ
ກີຣິຢາດ-ເຢອາຣິມ 10ຕັ້ງແຕ່ເຂດແດນ ບາອາລາ ໄດ້ເວັ້ນໄປສູ່ທິດຕາເວັນຕົກຈົນຮອດພູ ເສອີ
ແລະກາຍໄປຂ້າງພູ ເຢອາຣິມ ຊຶ່ງແມ່ນ ເກສາໂລນ ທາງທິດເໜືອ, ລົງໄປ ເບັດ-ເຊເມັດ ແລະ
ຜ່ານໄປທາງ ຕິມນາ 11ແລະເຂດແດນໄດ້ກວ້າງອອກໄປຮອດທາງຂ້າງ ເອັກໂຣນທາງທິດເໜືອ
ແລະເຂດແດນໄດ້ຖືກໝາຍໄວ້ຈົນຮອດຊິກເກໂຣນກາຍໄປພູບາອາລາ ແລະໄດ້ຍາວອອກໄປ
ຮອດຢັບເນເອນ ເຂດແດນໄດ້ໄປຮອດນໍ້າທະເລ

12ເຂດແດນທາງທິດຕາເວັນຕົກແມ່ນທະເລ ເມດີແຕຣາເນ ແລະຕາຝັ່ງນໍ້າທະເລນັ້ນ; ເຂດ
ແດນຂອງບັນດາລູກຫລານຢູດາຕາມຄອບຄົວຂອງພວກເຂົາກໍເປັນດັ່ງນັ້ນ.

## ກາເລັບຕີເອົາເຮັບໂຣນ ແລະເດບີ

13ຕາມຄຳສັ່ງຂອງ ພຣະຜູ້ເປັນເຈົ້າ ທີ່ພຣະອົງໄດ້ສັ່ງແກ່ໂຢຊວຍ ເພິ່ນໄດ້ມອບທີ່ດິນສ່ວນໜຶ່ງ
ໃນທ່າມກາງດິນຂອງພວກລູກຫລານຢູດາ ໃຫ້ແກ່ກາເລັບ ລູກຂອງ ເຢຟຸນເນ ຄື: ເມືອງ ເຮັບໂຣນ
ໃນ ກີຣິອາດ-ອາຣະບາ (ອາຣະບາ ເປັນພໍ່ຂອງ ອານາກ) 14ກາເລັບ ໄດ້ຂັບໄລ່ລູກຊາຍທັງສາມ

---

[ກ]ຖິ່ນແຫ້ງແລ້ງກັນດານ

ຂອງ ອານາກ ໃຫ້ໜີຈາກບ່ອນນັ້ນຄື: ທ່ານ ເຊຊາຍ, ອາຣີມານ ແລະ ຕານມາຍ 15ຈາກບ່ອນ
ນັ້ນ ເພິ່ນໄດ້ຂຶ້ນໄປຕໍ່ສູ້ກັບຊາວເມືອງ ເດບີ, ແຕ່ກ່ອນເມືອງ ເດບີ ມີຊື່ວ່າ ກີຣິອາດ-ເສເຟ 16ກາ-
ເລັບ ໄດ້ກ່າວວ່າ “ຖ້າບຸກຄົນໜຶ່ງຄົນໃດຕີເອົາຊະນະແລະຍຶດເມືອງ ກີຣິອາດ-ເສເຟ ໄດ້ ຂ້ອຍຈະ
ຍົກລູກສາວຂອງຂ້ອຍຄື ນາງ ອັກສາ ໃຫ້ເປັນເມຍຂອງຜູ້ນັ້ນ 17ໂອດນີເອນ ລູກຂອງ ເກນັດ ນ້ອງ
ຊາຍຂອງ ກາເລັບ ຍຶດ ເມືອງນັ້ນ ໄດ້ ແລະ ກາເລັບ ຈຶ່ງ ໄດ້ຍົກນາງ ອັກສາ ລູກສາວຂອງຕົນ ໃຫ້
ເປັນເມຍຂອງ ໂອດນີເອນ

18ຢູ່ຕໍ່ມາ ນາງ ອັກສາ ໄດ້ໄປຫາ ໂອດນີເອນ ແລະຊັກຊວນໃຫ້ຂໍນາທີ່ງໜຶ່ງນຳພໍ່ເຖົ້າ: ນາງ
ໄດ້ລົງຈາກຫລັງລາ ແລະ ກາເລັບ ໄດ້ຖາມນາງວ່າ “ເຈົ້າຢາກໄດ້ສິ່ງໃດ?” 19ນາງຕອບວ່າ “ຂໍ
ເຊີນຍົກຄວາມພອນໃຫ້ລູກທ້ອນ ເຫດວ່າພໍ່ໄດ້ມອບດິນທິດໃຕ້ໃຫ້ຂ້ອຍແລ້ວ; ຂໍມອບບໍ່ນ້ຳ
(ນ້ຳພຸ) ໃຫ້ລູກນຳ” ແລະເພິ່ນໄດ້ໃຫ້ບໍ່ນ້ຳເໜືອ ແລະບໍ່ນ້ຳໃຕ້ໃຫ້ແກ່ນາງ

## ເມືອງຕ່າງໆ ທີ່ເປັນຂອງເຜົ່າຢູດາ

20ດິນມໍລະດົກຂອງລູກຫລານ ຢູດາ ຕາມເຊື້ອສາຍຂອງພວກເຂົາເປັນດັ່ງນີ້: 21ເມືອງຕ່າງໆ
ທີ່ຢູ່ທິດໃຕ້ສຸດຂອງເຜົ່າ ຢູດາທີ່ຢູ່ໃກ້ກັບເຂດແດນ ເອໂດມ ເປັນດັ່ງນີ້: ເມືອງ ກັບເຊເອນ, ເອເດ,
ຢາກູເຣ 22ກີນາ, ດີໂມນາ, ອະດາດາ, 23ເກເດັດ, ຮາໂຊ, ອິດນັນ 24ຊີເຟ, ເຕເລັມ, ເບອາ-
ໂລດ, 25ເມືອງໃໝ່ ຮາໂຊ, ເກຣິໂຢດ, ເຮດຊະໂຣນ ຊຶ່ງແມ່ນຮາໂຊ 26ເມືອງ ອາມາມ, ເຊມາ,
ໂມລາດາ, 27ເມືອງ ຮາຊາ-ກັດດາ, ເຮຊະໂມນ, ເບັດ-ເປເລັດ 28ເມືອງ ຮາຊາ-ຊູອານ, ເບເອ-
ເຊບາ, ບີຊີໂອທີອາ, 29ເມືອງ ບາອາລາ, ອີຢິມ, ເອເຊັມ 30ເມືອງ ເອນໂຕລັດ, ເກຊິນ, ໂຮມາ
31ເມືອງ ຊິກລັກ, ມັດມານນາ, ສັນສັນນາ 32ເມືອງ ເລບາໂອດ, ຊິນຣິມ, ອາອິນ, ຣິມໂມນ,
ລວມບັນດາເມືອງທັງໝົດມີຊາວເກົ້າເມືອງຮ່ວມທັງບັນດາບ້ານທີ່ຢູ່ອ້ອມແອ້ມເມືອງ ເຫລົ່ານັ້ນ

33ໃນຕົນພູເມືອງ ເອຊະຕາໂອນ, ໂຊຣາ, ອາຊະນາ 34ເມືອງ ຊາໂນອາ ເອັນກັນນິມ, ຕັບປົວ,
ເອນາມ 35ເມືອງ ຢາຣະມຸດ, ອະດຸລາມ, ໂສໂກ, ອາເຊກາ 36ເມືອງ ຊະອາຣາຢິມ, ອາດີທາ-
ຢິມ, ເກເດຣາ, ເກເດໂຣທາຢິມ ສິບສີ່ເມືອງກັບຊົນນະບົດທີ່ຢູ່ອ້ອມແອ້ມບັນດາເມືອງເຫລົ່ານັ້ນ

37ເມືອງ ເຊນານ, ຮາດາຊາ, ມິກດັນ-ກາດ, 38ເມືອງ ດີເລອານ, ມິດຊະປາ, ໂຢກເທເອນ,
39ເມືອງ ລາກິດ, ໂບຊະກາດ, ເອັກໂລນ, 40ເມືອງ ກັບໂບນ, ລາມາມ, ກິດລິດ, 41ເມືອງ ເກ-
ເດໂຣດ, ເບັດ-ດາໂກນ, ນາອາມາ, ມັກເກດາ ທັງໝົດມີສິບຫົກເມືອງ ແລະຊົນນະບົດຂອງ
ບັນດາເມືອງເຫລົ່ານັ້ນ

42ເມືອງ ລິບນາ, ເອເທ, ອາຊານ, 43ເມືອງ ອິບຕາ, ອາຊະນາ, ເນດຊິບ, 44ເມືອງ ເກອີລາ,
ອັກຊີບ, ມາເຣຊາ ມີເກົ້າເມືອງ ແລະບັນດາຊົນນະບົດຂອງເມືອງເຫລົ່ານັ້ນ

45ເມືອງ ເອັກໂຣນ ແລະບັນດາ ເມືອງ ໃຫຍ່ ເມືອງນ້ອຍ ແລະ ບ້ານຕ່າງໆທັງໝົດ 46ຕັ້ງແຕ່
ເມືອງ ເອັກໂຣນ ໄປສູ່ນ້ຳທະເລ, ເມືອງທັງຫລາຍທີ່ຢູ່ຂ້າງ ເມືອງ ອາຊະໂດດ ແລະບັນດາຊົນນະ-
ບົດຂອງ ເມືອງນັ້ນ, 47ເມືອງ ອາຊະໂດດ ບັນດາ ເມືອງ ໃຫຍ່ ເມືອງນ້ອຍ ແລະບັນດາໝູ່ບ້ານ
ຕ່າງໆທີ່ຢູ່ນອກເມືອງ, ເມືອງ ຄາຊາ ແລະບັນດາໝູ່ບ້ານຕ່າງໆຂອງ ເມືອງນັ້ນຈົນຮອດນ້ຳຫ້ວຍ

ເອຢິບ ແລະນໍ້າທະເລໃຫຍ່[ກ] ແລະຕາມແຄມນໍ້າທະເລນັ້ນ
[48]ແລະເທິງພູເມືອງຊາມີ, ຢັດຕີ, ໂສໂກ, [49]ເມືອງດານນາ, ກີຣິອາດ-ສັນນາ ຊຶ່ງແມ່ນເດ-
ບີ, [50]ເມືອງອານາບ, ເອຊະເຕໂມ, ອານີມ, [51]ເມືອງໂກເຊັນ, ໂຮໂລນ ແລະກີໂລ, ມີສິບເອັດ
ເມືອງແລະບັນດາໝູ່ບ້ານຊົນນະບົດຂອງເມືອງເຫລົ່ານັ້ນ
[52]ເມືອງອາຫລັບ, ດູມາ, ເອຊານ, [53]ເມືອງຢານີມ, ເບັດ-ຕັບປົວ, ອະເຟກາ, [54]ເມືອງຮຸມ-
ຕາ, ກີຣິອາດ-ອາຣະບາຊຶ່ງແມ່ນເຮັບໂຣນ ແລະຊີໂອ, ມີເກົ້າເມືອງ ແລະບັນດາໝູ່ບ້ານຊົນນະ-
ບົດທີ່ຢູ່ເມືອງນັ້ນ
[55]ເມືອງມາໂອນ, ກາເມນ, ຊີເຟ, ຢູຕາ, [56]ເມືອງເຢດຊະເຣເອນ, ໂຢກເດອາມ, ຊາໂນ-
ອາ, [57]ເມືອງກາອີນ, ກິເບອາ, ຕິມນາສິບເມືອງ ແລະໝູ່ບ້ານນອກທີ່ຢູ່ເມືອງເຫລົ່ານັ້ນ
[58]ເມືອງຮັນຮູນ, ເບັດ-ຊູເຣ, ເກໂດເຣ, [59]ເມືອງມາອາຣາດ, ເບັດ-ອາໂນດ, ເອນເຕໂກນ
ລວມມີທັງຫມົດ ຫົກເມືອງ ແລະໝູ່ບ້ານຕ່າງໆຂອງເມືອງເຫລົ່ານັ້ນ
[60]ເມືອງກີຣິອາດ-ບາອານ ຊຶ່ງແມ່ນກີຣິຢາດ-ເຢອາຣີມ ແລະຣັບບາ ມີ ສອງເມືອງ ແລະ
ໝູ່ບ້ານຊົນນະບົດຂອງເມືອງເຫລົ່ານັ້ນ
[61]ໃນປ່າເມືອງເບັດ-ອາຣາບາ, ມິດດິນ, ເສກາກາ, [62]ເມືອງນິບຊານ, ເມືອງເກືອ ແລະ
ເອັນ-ເກດີ ມີຫົກຕົວເມືອງ ແລະບັນດາບ້ານນອກຂອງເມືອງເຫລົ່ານັ້ນ
[63]ແຕ່ພວກເຢບຸດໄດ້ອາໃສຢູ່ກັບພວກລູກຫລານຢູດາໃນເມືອງເຢຣູຊາເລັມຈົນເຖິງທຸກມື້ນີ້

# ບົດທີ 16

## ເຂດແດນທີ່ໄດ້ມອບໝາຍໃຫ້ເອຟຣາຢິມ ແລະມານາເຊຕາເວັນຕົກ

[1]ດິນແດນຂອງພວກລູກຫລານໂຢເຊັບແມ່ນເລີ່ມຕັ້ງແຕ່ແມ່ນໍ້າຢໍແດນ ຈາກເມືອງເຢຣີໂກຈົນ
ຮອດແມ່ນໍ້າເຢຣີໂກທາງທິດຕາເວັນອອກ, ຈາກປ່າຂຶ້ນໄປເມືອງເຢຣີໂກຈົນຮອດພູເບັດເອນ.
[2]ແລະເຂດແດນເລີ່ມຈາກເບັດເອນໄປຫາເມືອງລູເຊ ແລະຜ່ານໄປໃກ້ເຂດແດນຂອງຊາວອາຄີ
ຢູ່ທີ່ອາຕາໂຣດ [3]ລົງໄປຫາເຂດແດນທາງທິດຕາເວັນຕົກຂອງຊາວຢາຟະເລດຈົນຮອດເຂດ
ແດນເບັດ-ໂຮໂຣນຟາກລຸ່ມ ແລະຈົນຮອດເກເຊໄປຮອດນໍ້າທະເລ.
[4]ພວກລູກຫລານໂຢເຊັບ, ມານາເຊ ແລະ ເອຟຣາຢິມ ໄດ້ຮັບດິນແດນເຫລົ່ານັ້ນເປັນມໍລະ-
ດົກຂອງພວກເຂົາ

### ເອຟຣາຢິມ

[5]ເຂດແດນຂອງພວກລູກຫລານເອຟຣາຢິມຕາມເຊື້ອສາຍຂອງພວກເຂົາໂດຍມີເຂດແດນ
ດັ່ງນີ້: ເຂດແດນທາງທິດຕາເວັນອອກແມ່ນເລີ່ມຈາກອາຕາໂຣດ-ອັດດາຈົນຮອດເບັດ-ໂຮໂຣນ
ສູງ [6]ເຂດແດນຈາກທິດຕາເວັນຕົກອອກໄປສູ່ມິກເມທາດທາງທິດເໜືອ ແລະລ້ຽວໄປທາງທິດ-
ຕາເວັນອອກຈົນຮອດຕະອານັດ-ຊີໂລ ແລະຍາວອອກໄປທາງທິດຕາເວັນອອກຈົນຮອດຢາໂນ-
ອາ [7]ຈາກຢາໂນອາລົງໄປຫາອາຕາໂຣດ ແລະນະອາຣາຮອດເມືອງເຢຣີໂກ ແລະໄປຮອດ

[ກ]ທະເລເມດິແຕຣາເນ

ແມ່ນ້ຳຢໍແດນ 8ເຂດແດນທາງທິດຕາເວັນຕົກຕັ້ງແຕ່ຕັບປົວ ຈາກນ້ຳຫ້ວຍການາຈົນໄປຮອດ
ທະເລເມດິແຕຣາເນ ດິນມໍລະດົກຂອງເຜົ່າລູກຫລານເອຟຣາອິມຕາມຄອບຄົວຂອງພວກເຂົາກໍ
ເປັນດັ່ງນັ້ນ. 9ແລະບັນດາເມືອງທີ່ຕັ້ງໄວ້ຕ່າງຫາກສຳລັບໃຫ້ລູກຫລານເອຟຣາອິມໃນທ່າມກາງ
ດິນແດນມໍລະດົກຂອງລູກຫລານມານາເຊມີຄື ເມືອງທັງໝົດ ແລະບັນດາໝູ່ບ້ານນອກເມືອງ
ນັ້ນ

10ແຕ່ພວກເຂົາບໍ່ໄດ້ຂັບໄລ່ຊາວການາອານທີ່ໄດ້ອາໃສຢູ່ເມືອງເກເຊພີໄປ ແຕ່ຊາວການາ-
ອານໄດ້ອາໃສຢູ່ທ່າມກາງພວກເອຟຣາອິມຈົນເຖິງທຸກມື້ນີ້ ແຕ່ພວກເອຟຣາອິມໄດ້ບັງຄັບພວກ
ເຂົາໃຫ້ເຮັດວຽກເໝືອນກັບທາດ

# ບົດທີ 17

## ມານາເຊຕາເວັນຕົກ

1ດິນແດນຂອງເຜົ່າມານາເຊ (ມານາເຊເປັນລູກກົກຂອງໂຢເຊັບ) ສ່ວນມາກີເປັນລູກກົກ
ຂອງມານາເຊພໍ່ກິເລອາດ ຍ້ອນເພິ່ນຮູ້ເຮັດເສິກ ແຂວງກິເລອາດ ແລະແຂວງບາຊານຈຶ່ງ
ເປັນຂອງເພິ່ນ. 2ສ່ວນບັນດາລູກຫລານທັງຫລາຍຂອງເຜົ່າມານາເຊຕາມເຊື້ອສາຍຂອງພວກ
ເຂົາຄື: ອາບີເອເຊ, ເຮເລັກ, ອາຊະຣີເອນ, ເຊເຄັມ, ເຮເຟ, ເຊມີດາ ຄົນເຫລົ່ານີ້ແມ່ນລູກ
ຊາຍຂອງມານາເຊລູກຂອງໂຢເຊັບ

3ເຊໂລເຟຂາດລູກຂອງເຮເຟ ລູກຂອງກິເລອາດ, ກິເລອາດລູກຂອງມາກີ, ມາກີລູກມາ-
ນາເຊ ມານາເຊບໍ່ມີລູກຊາຍມີແຕ່ລູກຜູ້ຍິງເທົ່ານັ້ນຄື: ນາງມາລາ, ນາງໂນອາ, ນາງໂຮກລາ,
ນາງມີລະກາ ແລະນາງຕີຣະຊາ 4ບັນດາຜູ້ຍິງເຫລົ່ານີ້ໄດ້ເຂົ້າໄປຫາ ປະໂລຫິດເອເລອາຊາ
ໂຢຊວຍລູກຂອງນູນພ້ອມດ້ວຍບັນດາຜູ້ນຳໂດຍກ່າວວ່າ "ພຣະຜູ້ເປັນເຈົ້າໄດ້ສັ່ງແກ່ໂມເຊໃຫ້
ມອບສ່ວນດິນມໍລະດົກໃຫ້ພວກຂ້ານ້ອຍໃນທ່າມກາງພີ່ນ້ອງຂອງພວກຂ້ານ້ອຍ" ໂຢຊວຍຈຶ່ງໄດ້
ມອບດິນມໍລະດົກໃຫ້ແກ່ພວກເຂົາໃນທ່າມກາງອ້າຍນ້ອງຂອງພວກເຂົາຕາມຄຳສັ່ງຂອງພຣະຜູ້-
ເປັນເຈົ້າ 5ພວກມານາເຊໄດ້ຮັບສິບສ່ວນຮ່ວມທັງແຂວງກິເລອາດ ແລະແຂວງບາຊານທີ່ຢູ່ແມ່-
ນ້ຳຢໍແດນ ຟາກນັ້ນ 6ຍ້ອນວ່າບັນດາລູກຜູ້ຍິງຂອງມານາເຊໄດ້ຮັບດິນມໍລະດົກໃນທ່າມກາງ
ລູກຜູ້ຊາຍ ດັ່ງນັ້ນ ແຂວງກິເລອາດຈຶ່ງເປັນຂອງພວກລູກຊາຍຄົນອື່ນໆຂອງມານາເຊ

7ເຂດແດນຂອງມານາເຊເລີ່ມຕັ້ງແຕ່ອາເຊຈົນຮອດມິກເມທາດ ຊຶ່ງຢູ່ຕໍ່ໜ້າເມືອງເຊເຄັມ,
ເຂດແດນຍາວລົງໄປທາງທິດໃຕ້ຈົນກວມເອົາຊາວເມືອງເອັນ-ຕັບປົວ 8ເມືອງຕັບປົວຢູ່ໃນເຂດ
ແດນມານາເຊ ຊຶ່ງເປັນຂອງພວກລູກຫລານເອຟຣາອິມ 9ເຂດແດນໄດ້ລົງໄປທາງທິດໃຕ້ຂອງ
ນ້ຳຫ້ວຍການາບັນດາເມືອງຕ່າງໆໃນທ່າມກາງເມືອງເປັນຂອງພວກເອຟຣາອິມ 10ທິດໃຕ້ເປັນ
ຂອງພວກເອຟຣາອິມ ທິດເໜືອເປັນຂອງພວກມານາເຊ ຊຶ່ງເປັນນ້ຳທະເລ ແລະເປັນເຂດ
ແດນ, ທິດເໜືອຮອດດິນແດນອາເຊ ແລະທິດໃຕ້ຕາເວັນອອກໄປຮອດດິນແດນຂອງພວກອິດ-
ຊາຄາ 11ຢູ່ໃນດິນແດນຂອງພວກອິດຊາຄາ ແລະໃນດິນແດນຂອງພວກອາເຊ, ພວກມານາເຊ
ມີເມືອງເບັດ-ເຊອານ ແລະໝູ່ບ້ານທີ່ຢູ່ອ້ອມແອ້ມເມືອງນັ້ນ, ເມືອງອິບເລອາມ ແລະ ໝູ່ບ້ານທີ່ຢູ່

ອ້ອມແອ້ມເມືອງນັ້ນ ພ້ອມທັງປະຊາຊົນເມືອງ ເອັນ-ໂດເຣ ແລະໝູ່ບ້ານທີ່ຢູ່ອ້ອມແອ້ມເມືອງ
ນັ້ນ, ປະຊາຊົນເມືອງ ເມກິດໂດ ແລະໝູ່ບ້ານທີ່ຢູ່ອ້ອມແອ້ມເມືອງນັ້ນ ທັງສາມແຂວງນີ້ເປັນ
ດິນແດນທີ່ເປັນພູນ້ອຍ. [12]ແຕ່ລູກຫລານ ມານາເຊ ຍັງບໍ່ສາມາດຂັບໄລ່ປະຊາຊົນຊາວເມືອງທັງ-
ຫລາຍນັ້ນໃຫ້ໜີອອກໄປໄດ້ ແລະຊາວ ການາອານ ຍັງມີຄວາມປາດຖະໜາຈະຢູ່ໃນດິນແດນນັ້ນ
[13]ຢູ່ຕໍ່ມາເມື່ອລູກຫລານ ອິສຣາເອນ ໄດ້ເຂັ້ມແຂງຂຶ້ນ ພວກເຂົາໄດ້ໃຫ້ຊາວ ການາອານ ເສຍພາສີ
ແຕ່ບໍ່ໄດ້ຂັບໄລ່ພວກເຂົາໃຫ້ອອກໜີ

## ເອຟຣາຢິມ ແລະມານາເຊຕາເວັນຕົກຂໍຮ້ອງເອົາດິນແດນຕື່ມອີກ

[14]ພວກລູກຫລານ ໂຢເຊັບ ໄດ້ເວົ້າແກ່ ໂຢຊວຍ ວ່າ "ເປັນຫຍັງທ່ານຈຶ່ງ ແບ່ງດິນມໍລະດົກສ່ວນ
ດຽວໃຫ້ແກ່ພວກເຮົາທີ່ເປັນພວກໃຫຍ່ກວ່າ ພຣະຜູ້ເປັນເຈົ້າ ໄດ້ອວຍພອນໃຫ້ພວກເຮົາຈົນເຖິງ
ທຸກມື້ນີ້" [15]ໂຢຊວຍ ໄດ້ຕອບພວກເຂົາວ່າ "ຖ້າພວກທ່ານເປັນພວກໃຫຍ່ ຈົ່ງຂຶ້ນໄປໃນດົງ ແລະ
ຕັດໄມ້ລົງ ເພື່ອເປັນບ່ອນຢູ່ອາໃສສຳລັບພວກທ່ານໃນດິນແດນພວກ ເປຣີຊີ ແລະພວກ ເຣຟາຢິມ
ຖ້າວ່າພູ ເອຟຣາຢິມ ແຄບໂພດສຳລັບພວກເຈົ້າ" [16]ລູກຫລານ ໂຢເຊັບ ໄດ້ກ່າວວ່າ "ພູນັ້ນພວກ
ເຮົາຍຶດເອົາບໍ່ໄດ້ ເພາະຊາວ ການາອານ ທີ່ຢູ່ໃນຮ່ອມພູເມືອງ ເບັດ-ເຊອານ ແລະໝູ່ບ້ານທີ່ຢູ່
ນອກເມືອງນັ້ນ ພ້ອມກັບພວກທີ່ຢູ່ໃນຮ່ອມພູ ເຢດຊະເຣເອນ ນັ້ນ ມີລົດຮົບຫລາຍຄັນ [17]ໂຢຊວຍ
ໄດ້ເວົ້າກັບຄອບຄົວ ໂຢເຊັບ ຄື ພວກ ເອຟຣາຢິມ ມານາເຊ ວ່າ "ພວກທ່ານເປັນພວກທີ່ມີຈຳ-
ນວນຄົນຫລາຍ ແລະມີກຳລັງແຮງ ສະນັ້ນ ພວກທ່ານຈະບໍ່ມີທີ່ດິນແຕ່ຕອນດຽວເທົ່ານັ້ນ ພູຈະ
ຕ້ອງເປັນຂອງພວກທ່ານ [18]ພູນັ້ນຈະເປັນປ່າດົງ ພວກທານຈົ່ງປ້ຳໄມ້ລົງ ແລະຖາກຖາງໃຫ້ເປັນ
ຂອງພວກທ່ານຈົນສຸດປ່າດົງນັ້ນ ເຖິງແມ່ນຊາວ ການາອານ ມີລົດຮົບທີ່ເຮັດດ້ວຍເຫລັກຫລາຍ
ຄັນ ມີກຳລັງຫລາຍ ພວກທ່ານຈົ່ງຂັບໄລ່ຊາວ ການາອານ ໃຫ້ໜີໄປສາ.

# ບົດທີ 18

## ໂຢຊວຍແບ່ງປັນດິນແດນສ່ວນທີ່ເຫລືອ

[1]ພວກລູກຫລານຊາວ ອິສຣາເອນ ທັງໝົດທີ່ຍັງເຫລືອໄດ້ເຕົ້າໂຮມກັນໃນເມືອງຊີໂລ ແລະໄດ້
ຕັ້ງຄ້າຍພັກອາໃສຂຶ້ນຢູ່ໃນທີ່ນັ້ນ ແລະດິນແດນນັ້ນກໍຕົກຢູ່ໃນການຄອບຄອງຂອງພວກເຂົາ
[2]ໃນທ່າມກາງ ພວກ ລູກ ຫລານ ຊາວ ອິສຣາເອນ ຍັງ ມີ ເຈັດ ເຜົ່າ ທີ່ ຍັງ ບໍ່ ໄດ້ ຮັບ ສ່ວນ ດິນ ມໍລະດົກ
[3]ໂຢຊວຍ ໄດ້ບອກລູກຫລານ ອິສຣາເອນ ວ່າ "ທ່ານທັງຫລາຍຈະລໍຖ້າໃຫ້ຊ້າອີກດົນປານໃດ ຈຶ່ງ
ຈະ ເຂົ້າ ໄປ ຍຶດ ຄອງ ເອົາ ແຜ່ນດິນທີ່ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງປູ່ຍ່າຕາຍາຍ ໄດ້ປະທານໃຫ້
ແກ່ທ່ານ [4]ຈົ່ງເລືອກເອົາຄົນສາມຄົນໃນແຕ່ລະເຜົ່າ ແລະເຮົາຈະໃຊ້ພວກເຂົາໄປ ແລ້ວພວກເຂົາ
ຈະເດີນທາງໄປມາທົ່ວແຜ່ນດິນ ແລະແຕ້ມຮູບເນື້ອທີ່ ໂດຍປະມານຕາມສ່ວນດິນມໍລະດົກຂອງ
ພວກເຂົາ ຫລັງຈາກນັ້ນ ໃຫ້ພວກເຂົາກັບຄືນມາຫາເຮົາ [5]ຈົ່ງແບ່ງດິນແດນອອກເປັນເຈັດສ່ວນ
ເຜົ່າຢູດາ ຈົ່ງຢູ່ໃນເຂດແດນທາງທິດໃຕ້ຂອງພວກເຂົາ ແລະຄອບຄົວຂອງ ໂຢເຊັບ ຈົ່ງຢູ່ໃນເຂດ
ແດນທາງທິດເໜືອຂອງພວກເຂົາ [6]ທ່ານຈົ່ງແຕ້ມແຜ່ນທີ່ເປັນເຈັດສ່ວນ ແລະຈົ່ງເອົາມາໃຫ້ເຮົາ
ຢູ່ທີ່ນີ້, ເຮົາຈະຈົກສະຫລາກສຳລັບພວກທ່ານຢູ່ຕໍ່ໜ້າ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງພວກເຮົາ

[7]ແຕ່ບໍ່ມີສ່ວນ ແບ່ງສຳລັບພວກ ເລວີ ໃນທ່າມກາງພວກທ່ານ ເພາະວ່າຕຳແໜ່ງປະໂລຫິດຂອງ
ພຣະຜູ້ເປັນເຈົ້າ ເປັນມໍລະດົກຂອງພວກເຂົາ; ເຜົ່າຄາດ, ເຜົ່າຣູເບັນ, ເຜົ່າ ມານາເຊ ເຄິ່ງໜຶ່ງໄດ້
ຮັບສ່ວນດິນມໍລະດົກຂອງພວກເຂົາແລ້ວ ຊຶ່ງ ໂມເຊ ຜູ້ຮັບໃຊ້ຂອງ ພຣະຜູ້ເປັນເຈົ້າ ໄດ້ມອບໃຫ້
ແກ່ພວກເຂົາໃນທາງທິດຕາເວັນອອກຂອງແມ່ນໍ້າຢໍແດນ ຟາກພຸ້ນ

[8]ຄົນ ເຫລົ່ານັ້ນທີ່ຖືກ ເລືອກກໍໄດ້ ເດີນທາງ ໄປ ແລະ ໂຢຊວຍ ໄດ້ສັ່ງ ແກ່ພວກທີ່ໄປ ແຕ້ມ ແຜນທີ່
ນັ້ນວ່າ “ຈົ່ງເດີນທາງໄປມາໃນດິນແດນ ຈົ່ງແຕ້ມຮູບແຜນທີ່ ແລະກັບຄືນມາຫາເຮົາອີກ, ເຮົາ
ຈະຈົກສະຫລາກຕໍ່ໜ້າ ພຣະຜູ້ເປັນເຈົ້າ ສຳລັບພວກທ່ານຢູ່ໃນເມືອງຊີໂລນີ້ [9]ບັນດາຄົນເຫລົ່ານັ້ນ
ກໍໄດ້ອອກເດີນທາງໄປໂດຍແຍກດິນແດນ ແລະໄດ້ແຕ້ມຮູບແຜນທີ່ໃນປຶ້ມ ເປັນສ່ວນຕາມແຕ່
ລະເມືອງ, ແລ້ວພວກເຂົາໄດ້ກັບໄປຫາ ໂຢຊວຍ ທີ່ຄ້າຍພັກໃນເມືອງຊີໂລ. [10]ຢູ່ທີ່ນັ້ນ ໂຢຊວຍ ໄດ້
ແບ່ງປັນແຜນດິນໃຫ້ແກ່ພວກລູກຫລານຊາວ ອິສຣາເອນ ຕາມພາກສ່ວນຂອງພວກເຂົາ

## ດິນແດນທີ່ໄດ້ຮັບມອບໝາຍແບ່ງໃຫ້ເຜົ່າເບັນຢາມິນ

[11]ສະຫລາກ ໄດ້ຕົກຖືກ ເຜົ່າ ເບັນຢາມິນ ຕາມ ເຊື້ອສາຍ ຂອງພວກ ເຂົາ ແລະສ່ວນດິນແດນທີ່
ເປັນ ຂອງພວກ ເຂົາຢູ່ລະຫວ່າງກາງດິນ ແດນ ຂອງພວກລູກຫລານ ຢູດາ ແລະພວກລູກຫລານ
ໂຢເຊັບ [12]ເຂດ ແດນ ຂອງພວກ ເຂົາຢູ່ທາງທິດເໜືອ ໂດຍ ເລີ່ມຕັ້ງແຕ່ ແມ່ນໍ້າ ຢໍແດນ ຂຶ້ນ ໄປດ້ານ
ຂ້າງ ເມືອງ ເຢຣິໂກ ທາງທິດເໜືອ ແລະຂຶ້ນໄປຫາພູທາງທິດຕາເວັນຕົກຈົນ ໄປຮອດປ່າ ເບັດ-ອາ-
ເວນ [13]ຈາກບ່ອນນັ້ນ ເຂດແດນໄດ້ໄປຮອດດ້ານຂ້າງ ເມືອງ ລູເຊ ທາງທິດໃຕ້ ຊຶ່ງແມ່ນ ເບັດເອນ
ແລ້ວລົງ ໄປ ອາຕາໂຣດ-ອັດດາ ໃກ້ກັບພູ ຊຶ່ງຢູ່ ເບື້ອງລຸ່ມຂອງ ເມືອງ ເບັດ-ໂຮໂຮນ. [14]ເຂດແດນ
ໄດ້ຖືກໝາຍ ໄວ້ແມ່ນລ້ຽວຈາກທາງທິດຕາເວັນຕົກ ໄປຫາໃຕ້ ຈາກພູຊຶ່ງຢູ່ທາງ ເບັດ-ໂຮໂຮນ ທາງ
ທິດໃຕ້ ຈົນຮອດ ເມືອງ ກີຣິອາດ-ບາອານ ຊຶ່ງ ແມ່ນ ກີຣິຢາດ-ເຢອາຣິມ; ເມືອງທີ່ ເປັນ ຂອງລູກ
ຫລານ ຢູດາ ທາງທິດຕາເວັນຕົກກໍ ເປັນດັ່ງນັ້ນ. [15]ພາກ ໃຕ້ ເລີ່ມຕັ້ງແຕ່ບ່ອນສຸດຂອງ ເມືອງ ກີຣິ-
ຢາດ-ເຢອາຣິມ ຍາວອອກໄປທາງທິດຕາເວັນຕົກໄປສູ່ນໍ້າພຸ ເນັບໂຕອາ [16]ເຂດແດນຍາວລົງໄປ
ຈົນຮອດພູ ຊຶ່ງຢູ່ຕໍ່ໜ້າກັບຮ່ອມພູ ເບັນ-ຮິນໂນມ ແລະຢູ່ໃນຮ່ອມພູຂອງພວກ ເຣຟາຢິມ ທາງທິດ-
ເໜືອ ແລະລົງໄປຕາມຮ່ອມພູຮິນ ໂນຂ້າງ ເມືອງ ເຢບຸດ ທາງທິດໃຕ້ ແລ້ວລົງໄປທີ່ ເອັນ-ໂຣເກນ.
[17]ເຂດແດນ ໄດ້ໝາຍ ໄວ້ທາງທິດເໜືອອອກໄປທາງ ເອັນ-ເຊເມັດ ໄປຮອດ ເກລີໂລດ ຊຶ່ງຢູ່ໃກ້ກັບ
ທາງຂຶ້ນ ໄປ ອະດູມມິມ ແລ້ວລົງ ໄປຫາຫີນ ແທ່ງ ໂບຮານ ລູກຂອງ ຣູເບັນ [18]ແລະກາຍ ໄປທິດ-
ເໜືອ ຊຶ່ງຢູ່ຕໍ່ໜ້າກັບ ອາຣາບາ ແລ້ວລົງ ໄປ ອາຣາບາ [19]ເຂດແດນໄດ້ກາຍໄປຂ້າງ ເມືອງ ເບັດ-
ໂຮກລາ ທາງທິດເໜືອຈົນ ໄປຮອດສຸດປາຍນໍ້າທະເລເຄັມທາງທິດເໜືອ ຊຶ່ງຢູ່ໃກ້ກັບປາກແມ່ນໍ້າ
ຢໍແດນ ທາງທິດໃຕ້; ເຂດແດນທາງທິດໃຕ້ກໍເປັນດັ່ງນັ້ນ [20]ແລະແມ່ນໍ້າຢໍແດນກໍເປັນເຂດແດນ
ທາງທິດຕາເວັນອອກ; ດິນ ມໍລະດົກ ຂອງ ລູກຫລານ ເບັນຢາມິນ ຕາມ ເຊື້ອສາຍ ຂອງພວກ ເຂົາ
ແລະຕາມເຂດທົ່ວໄປຂອງພວກເຂົາກໍເປັນດັ່ງນັ້ນ

[21]ບັນດາເມືອງຕ່າງ ໆ ຂອງລູກຫລານ ເບັນຢາມິນ ຕາມເຊື້ອສາຍຂອງພວກເຂົາແມ່ນເມືອງ ເຢ-
ຣິໂກ, ເບັດ-ໂຮກລາ, ເອເມັກ-ເກຊິດ [22]ເບັດ-ອາຣາບາ, ເຊມາຣາຢິມ, ເບັດເອນ, [23]ເມືອງ
ອາວາ, ປາຣາ ໂອຟຣາ, [24]ເມືອງ ເກຟາ-ອຳໂມນີ, ໂອຟະນີ ແລະ ເກບາ ມີສິບສອງເມືອງ

ແລະໝູ່ບ້ານທີ່ຢູ່ອ້ອມແອ້ມບັນດາເມືອງເຫລົ່ານັ້ນ
[25]ເມືອງກິເບໂອນ, ຣາມາ, ເບເອໂຣດ, [26]ມິດຊະປາ, ເກຟີຣາ, ໂມຊາ, [27]ເມືອງເຣເກັມ,
ອີຣະເປເອນ, ຕາຣາລາ, [28]ເມືອງເຊລາ, ເອເລັບ, ເຢບຸດ ຊຶ່ງແມ່ນເຢຣູຊາເລັມ, ກິເບອາ,
ກີຣີຢາດ ສິບສີ່ເມືອງກັບບັນດາໝູ່ບ້ານນອກເມືອງເຫລົ່ານັ້ນ ດິນມໍລະດົກຂອງລູກຫລານເບັນ-
ຢາມິນຕາມບັນດາເຊື້ອສາຍຂອງພວກເຂົາກໍເປັນດັ່ງນັ້ນ

# ບົດທີ 19

## ເຂດແດນທີ່ໄດ້ມອບໝາຍໃຫ້ເຜົ່າຊີເມໂອນ

[1]ສະຫລາກສ່ວນທີສອງໄດ້ຕົກຖືກລູກຫລານຊີເມໂອນ ຕາມບັນດາເຊື້ອສາຍຂອງພວກເຂົາ
ແລະມໍລະດົກຂອງພວກເຂົາຢູ່ທ່າມກາງມໍລະດົກຂອງລູກຫລານຢູດາ [2]ໃນສ່ວນມໍລະດົກຂອງ
ພວກເຂົາມີເມືອງເບເອ-ເຊບາ ຫລື ເຊບາ ແລະໂມລາດາ [3]ຮາຊາ-ຊູອານ, ບາລາ, ເອເຊັມ,
[4]ເອນໂຕລັດ, ເບັດອູນ, ໂຮມາ, [5]ຊິກລັກ, ເບັດ-ມັກກາໂບດ, ຮາຊາ-ສູສາ, [6]ເບັດ-ເລບາໂອດ
ແລະຊາຣູເຮັນ ລວມທັງໝົດສິບສາມຕົວເມືອງ ແລະບ້ານນອກຂອງເມືອງເຫລົ່ານັ້ນ [7]ເມືອງ
ອາອິນ, ຣິມໂມນ, ເອເທ, ອາຊານ ລວມເປັນສີ່ຕົວເມືອງ ແລະໝູ່ບ້ານຊົນນະບົດຂອງເມືອງ
ນັ້ນ [8]ລວມທັງໝູ່ບ້ານຕ່າງໆທີ່ຢູ່ອ້ອມແອ້ມເມືອງເຫລົ່ານັ້ນ ຈົນຮອດບາອາລາດ-ເບເອຊຶ່ງແມ່ນ
ຣາມາຈາກທິດໃຕ້ ດິນມໍລະດົກຂອງລູກຫລານຊີເມໂອນ ແລະຄອບຄົວຂອງພວກເຂົາກໍເປັນ
ດັ່ງນັ້ນ [9]ດິນມໍລະດົກຂອງລູກຫລານຊີເມໂອນໄດ້ແຍກອອກມາຈາກສ່ວນມໍລະດົກຂອງລູກ
ຫລານຢູດາ ເພາະວ່າສ່ວນທີ່ເປັນມໍລະດົກຂອງລູກຫລານຢູດາກວ້າງໂພດສຳລັບພວກເຂົາ
ດັ່ງນັ້ນ ລູກຫລານຊີເມໂອນຈຶ່ງໄດ້ຮັບມໍລະດົກໃນທ່າມກາງມໍລະດົກຂອງພວກຢູດາ

## ເຂດແດນທີ່ໄດ້ຮັບມອບໝາຍໃຫ້ເຜົ່າເຊບູລູນ

[10]ສະຫລາກທີສາມໄດ້ຕົກຖືກລູກຫລານເຊບູລູນຕາມເຊື້ອສາຍຂອງພວກເຂົາ ເຂດແດນມໍ-
ລະດົກຂອງພວກເຂົາໄປຈົນຮອດສາຣິດ [11]ເຂດແດນຂອງພວກເຂົາຂຶ້ນໄປທາງທິດຕາເວັນຕົກ
ຈົນຮອດມາຣາລາ ແລະໄປຮອດດັບເບເຊັດ ເລີຍໄປຮອດນ້ຳຫ້ວຍທີ່ຢູ່ຕໍ່ໜ້າໂຢກເນອາມ
[12]ຈາກສາຣິດລ້ຽວໄປທາງທິດຕາເວັນອອກເທິງເຂດແດນກິສະໂລດ-ຕາໂບ ເລອອກໄປຮອດ
ດາເບຣາດຂຶ້ນໄປຫາຢາເຟຍ [13]ຈາກບ່ອນນັ້ນ ເຂດແດນໄດ້ກາຍໄປທາງທິດຕາເວັນອອກຈົນ
ຮອດກັດ-ເຮເຟ ແລະເອັດ-ກະຊິນ ອອກໄປສູ່ຣິມໂມນກວມໄປເຖິງເນອາ [14]ເຂດແດນໄດ້
ລ້ຽວຈາກທີ່ນັ້ນໄປທາງທິດເໜືອເຖິງຮັນນາໂທນ ແລະໄປຮອດຮ່ອມອິບຕາ-ເອນ, [15]ກັດຕາດ,
ນາຮາລານ, ຊິມໂຣນ, ອີດາລາ ແລະເບັດເລເຮັມ ລວມທັງໝົດສິບສອງເມືອງ ລວມທັງບັນ-
ດາໝູ່ບ້ານທີ່ຢູ່ນອກຂອງເມືອງເຫລົ່ານັ້ນ [16]ດິນມໍລະດົກຂອງລູກຫລານເຊບູລູນຕາມເຊື້ອສາຍ
ຂອງພວກເຂົາກໍເປັນດັ່ງນັ້ນ ໂດຍມີບັນດາເມືອງ ແລະໝູ່ບ້ານທີ່ຢູ່ອ້ອມເມືອງເຫລົ່ານັ້ນ

## ເຂດແດນທີ່ໄດ້ຮັບມອບໝາຍໃຫ້ເຜົ່າອິດຊາຄາ

[17]ສະຫລາກທີສີ່ໄດ້ຕົກຖືກອິດຊາຄາສຳລັບລູກຫລານອິດຊາຄາຕາມເຊື້ອສາຍຂອງພວກເຂົາ
[18]ດິນແດນຂອງພວກເຂົາລວມມີເມືອງເຢດຊະເຣເອນ, ເກສຸນໂລດ, [19]ຊູເນມ, ຮາຟາຣາອີມ,

ຊີໂອນ, ອານາຣາຣາດ, 20ຣັບບິດ, ກີຊີໂອນ, ເອເບັດ 21ເຣເມັດ, ເອັນກັນນີມ, ເອັນ-ຮັດດາ
ແລະ ເບັດ-ປັດເຊັດ 22ເຂດແດນໄດ້ໄປຮອດຕາໂບ, ຊາຮາຊູມາ, ເບັດ-ເຊເມັດ ແລະແມ່ນ້ຳຢໍ-
ແດນ ລວມມີສິບສອງຕົວເມືອງ ລວມທັງໝູ່ບ້ານອ້ອມແອ້ມຂອງເມືອງເຫລົ່ານັ້ນ 23ດິນມໍລະດົກ
ຂອງລູກຫລານ ອິດຊາຄາ ຕາມເຊື້ອສາຍຂອງພວກເຂົາກໍເປັນດັ່ງນັ້ນ

## ເຂດແດນທີ່ໄດ້ຮັບມອບໝາຍໃຫ້ເຜົ່າອາເຊ

24ສະຫລາກທີຫ້າໄດ້ຕົກຖືກ ພວກລູກຫລານຕະກູນ ອາເຊ ຕາມເຊື້ອສາຍຂອງພວກເຂົາ
25ດິນແດນຂອງພວກເຂົາແມ່ນເມືອງ ເຮັນກາດ, ຮາລີ, ເບເຕັນ, ອັກຊາບ, 26ອັນລຳເມເລັກ,
ອາມາດ, ມີຊານ ເຂດແດນທາງທິດຕາເວັນຕົກແມ່ນ ກາເມນ ແລະຊີໂຮ-ລິບນາດ 27ແລ້ວໄດ້
ລ້ຽວໄປທາງທິດຕາເວັນອອກໄປຫາ ເບັດ-ດາໂກນ ຈົນຮອດເຂດແດນ ເຊບູລູນ, ຮ່ອມ ອີບຕາ-
ເອນ ທາງທິດເໜືອ ແລະໄປຮອດ ເບັດ-ເອເມັກ, ເນອີເອນ ອອກໄປສູ່ ກາບູນ ທາງທິດເໜືອ
28ແລະອອກໄປສູ່ ເອັບໂຣນ, ເຣໂຮບ, ຮຳໂມນ, ການາ ຈົນຮອດເມືອງໃຫຍ່ຊີໂດນ 29ແລ້ວລ້ຽວ
ໄປຫາ ຣາມາ ຈົນຮອດເມືອງ ຕີເຣ ທີ່ມີກຳແພງ ແລະເຂດແດນໄດ້ແວະໄປຫາ ໂຮສາ ສຸດຢູ່ທີ່ນ້ຳ
ທະເລ[ກ] ໃກ້ກັບແຂວງ ອັກຊີບ 30ແລະເມືອງ ອູມມາ, ອາເຟັກ, ເຣໂຮບ ລວມທັງໝົດມີຊາວ
ສອງຕົວເມືອງ ແລະບ້ານອ້ອມແອ້ມບັນດາເມືອງເຫລົ່ານັ້ນ 31ດິນມໍລະດົກຂອງຕະກູນລູກ
ຫລານ ອາເຊ ຕາມເຊື້ອສາຍຂອງພວກເຂົາ ຊຶ່ງມີເມືອງຕ່າງໆ ແລະບັນດາໝູ່ບ້ານອ້ອມແອ້ມ
ເມືອງກໍເປັນດັ່ງນັ້ນ

## ເຂດແດນທີ່ໄດ້ຮັບມອບໝາຍໃຫ້ເຜົ່ານັບທາລີ

32ສະຫລາກທີຫົກໄດ້ຕົກຖືກລູກຫລານ ນັບທາລີ ສຳລັບລູກຫລານ ນັບທາລີ ຕາມເຊື້ອສາຍ
ຂອງພວກເຂົາ 33ເຂດແດນຂອງພວກເຂົາເລີ່ມຕັ້ງແຕ່ ເຮເລັບ ຈາກຕົ້ນໂອກ[ຂ] ຊາອັນອັນນີມ
ແລະ ອະດາມີ-ເນເກັບ, ຢັບເນເອນ ໄປຈົນຮອດ ລັກກຸມ, ສຸດຢູ່ທີ່ແມ່ນ້ຳຢໍແດນ 34ເຂດແດນໄດ້
ລ້ຽວໄປທາງທິດຕາເວັນຕົກອອກໄປສູ່ ອັດຊະໂນດ-ຕາໂບ ອອກຈາກບ່ອນນີ້ໄປຮອດ ຮູກໂກກ,
ແລະໄປຮອດພາກໃຕ້ຂອງແຂວງ ເຊບູລູນ ເລີຍໄປຮອດດ້ານທິດຕາເວັນອອກຮອດແຂວງ ຢູດາ
ທີ່ຢູ່ເທິງ ແມ່ນ້ຳ ຢໍແດນ ທາງທິດຕາເວັນອອກ 35ແລະບັນດາເມືອງທີ່ມີກຳແພງຄື ເມືອງ ຊິດດີມ,
ເຊເຣ, ຮຳມາດ, ຮັກກັດ, ກິນເນເຣດ, 36ອະດາມາ, ຣາມາ, ຮາໂຊ, 37ເກເດັດ, ເອັດເຣອີ,
ເອັນ-ຮາໂຊ, 38ຢີໂຣນ, ມິກດັນ-ເອນ, ໂຮເຣມ, ເບັດ-ອານາດ ແລະ ເບັດ-ເຊເມັດ; ລວມມີສິບ
ເກົ້າຕົວເມືອງ ແລະບັນດາໝູ່ບ້ານອ້ອມແອ້ມຂອງເມືອງເຫລົ່ານັ້ນ. 39ດິນມໍລະດົກຂອງລູກ
ຫລານເຜົ່ານັບທາລີ ຕາມເຊື້ອສາຍຂອງພວກເຂົາ ເມືອງຕ່າງໆ ແລະບັນດາໝູ່ບ້ານອ້ອມແອ້ມ
ເມືອງກໍເປັນດັ່ງນັ້ນ

## ເຂດແດນທີ່ໄດ້ຮັບມອບໝາຍໃຫ້ເຜົ່າດ່ານ

40ສະຫລາກທີເຈັດໄດ້ຕົກຖືກເຜົ່າຂອງລູກຫລານດ່ານ ອີງຕາມເຊື້ອສາຍຂອງພວກເຂົາ
41ດິນແດນທີ່ເປັນມໍລະດົກຂອງພວກເຂົາແມ່ນເມືອງ ໂຊຣາ, ເອຊະຕາໂອນ, ອີຣະ-ເຊເມັດ,
42ຊະອາລັບບິນ, ອາຢາໂລນ, ອີທະລາ, 43ເອໂລນ, ຕິມນາ, ເອັກໂຣນ, 44ເອນເຕເກ, ກິບ-

[ກ]ທະເລເມດິແຕຣາເນ [ຂ]ຕົ້ນໄມ້ໃຫຍ່ຊະນິດໜຶ່ງ

ເບໂທນ, ບາອາລາດ, [45]ເຢຮຸດ, ເບເນ-ເບຣັກ, ກັດ-ຣິມໂມນ, [46]ເມ-ຢາໂກນ, ຣັກໂກນ
ແລະດິນແດນທີ່ຖັດຈາກຢັບປາ [47]ເຂດແດນຂອງລູກຫລານດານໄດ້ສິ້ນສຸດໃນບ່ອນນັ້ນ ລູກ
ຫລານດານໄດ້ໂຈມຕີເມືອງເລເຊັມດ້ວຍດາບ ແລະຍຶດເອົາເມືອງ ໂດຍດຳລົງຊີວິດຢູ່ບ່ອນນັ້ນ
[48]ດິນມໍລະດົກຂອງລູກຫລານເຜົ່າດານຕາມເຊື້ອສາຍຂອງພວກເຂົາ, ບັນດາເມືອງ ແລະບັນດາ
ໝູ່ບ້ານອ້ອມເມືອງກໍເປັນດັ່ງນັ້ນ

## ການແບ່ງປັນດິນແດນຄັ້ງສຸດທ້າຍ

[49]ເມື່ອພວກເຂົາໄດ້ແບ່ງປັນດິນແດນຕາມເຂດແດນສຳເລັດແລ້ວ, ພວກລູກຫລານອິສຣາ-
ເອນໄດ້ແບ່ງປັນດິນມໍລະດົກໃນທ່າມກາງພວກເຂົາໃຫ້ແກ່ໂຢຊວຍລູກຂອງນູນ [50]ຕາມຄຳສັ່ງ
ຂອງພຣະຜູ້ເປັນເຈົ້າ ພວກເຂົາໄດ້ມອບເມືອງໃຫ້ໂຢຊວຍຕາມທີ່ເພິ່ນໄດ້ຂໍຄື: ເມືອງຕິມນາດ-
ເສຣາ ຊຶ່ງຢູ່ເທິງພູເອຟຣາຢິມ, ເພິ່ນໄດ້ກໍ່ສ້າງເມືອງ ແລະອາໃສຢູ່ບ່ອນນັ້ນ

[51]ມໍລະດົກທັງໝົດທີ່ປະໂລຫິດເອເລອາຊາ ແລະໂຢຊວຍລູກຫລານຂອງນູນ ພ້ອມທັງບັນ-
ດາຜູ້ນຳຕັ້ງແຕ່ປູ່ຍ່າຕາຍາຍຂອງລູກຫລານຊາວອິສຣາເອນທີ່ໄດ້ແບ່ງປັນກັນດ້ວຍການຈົກສະ-
ຫລາກຢູ່ທີ່ເມືອງຊີໂລຕໍ່ໜ້າພຣະຜູ້ເປັນເຈົ້າ ຢູ່ທີ່ປະຕູຄ້າຍພັກອາໃສກໍເປັນດັ່ງນີ້ແຫລະ ການ
ແບ່ງປັນຈຶ່ງສຳເລັດເປັນທີ່ຮຽບຮ້ອຍ.

# ບົດທີ 20

## ກຳນົດຫົວເມືອງລີ້ໄພ

[1]ພຣະຜູ້ເປັນເຈົ້າໄດ້ບອກໂຢຊວຍວ່າ “ຈົ່ງເວົ້າກັບພວກລູກຫລານອິສຣາເອນດັ່ງນີ້ [2]ຈົ່ງຕັ້ງ
ບັນດາເມືອງລີ້ໄພໄວ້ສຳລັບພວກທ່ານຕາມທີ່ເຮົາໄດ້ບອກພວກທ່ານໂດຍຜ່ານໂມເຊນັ້ນ [3]ຖ້າ
ຄົນໃດຂ້າຄົນໂດຍບໍ່ເຈດຕະນາ ແລະບໍ່ໄດ້ຕັ້ງໃຈ ລາວກໍຕ້ອງປົບໜີໄປບ່ອນນັ້ນ ແລະບັນດາ
ເມືອງນັ້ນກໍຈະເປັນບ່ອນລີ້ໄພ ເພື່ອພົ້ນຈາກເງື້ອມມືຂອງຜູ້ຄຽດແຄ້ນ [4]ແລະຜູ້ທີ່ໄດ້ຂ້າຄົນໃຫ້ປົບ
ໜີໄປລີ້ຢູ່ໃນເມືອງທີ່ໄດ້ຕັ້ງໄວ້ນັ້ນ, ແລະຈົ່ງຢືນຢູ່ທີ່ປະຕູເມືອງ ຈົ່ງເລົ່າເລື່ອງສິ່ງທີ່ເກີດຂຶ້ນກັບ
ຕົນໃຫ້ພວກຜູ້ປົກຄອງເມືອງນັ້ນຟັງ ແລະເພິ່ນຈະຮັບຜູ້ນັ້ນໂດຍນຳລາວເຂົ້າໄປໃນເມືອງ ໃຫ້
ສະຖານທີ່ພັກເຊົາ ແລະໃຫ້ລາວດຳລົງຊີວິດຮ່ວມກັບຄົນໃນເມືອງນັ້ນ. [5]ຖ້າຜູ້ຄຽດແຄ້ນຕິດຕາມ
ລາວມາ, ພວກຜູ້ປົກຄອງ ຢ່າໄດ້ມອບຄົນທີ່ຂ້າຄົນນັ້ນໃຫ້ກັບຜູ້ຄຽດແຄ້ນເພາະວ່າລາວຂ້າເພື່ອນ
ບ້ານໂດຍບໍ່ຮູ້ຈັກ ແລະບໍ່ໄດ້ກຽດຊັງກັນມາກ່ອນ [6]ໃຫ້ຜູ້ນັ້ນອາໃສຢູ່ໃນເມືອງ ນັ້ນຈົນຮອດເວລາ
ສານຕັດສິນຕໍ່ໜ້າປະຊາຊົນ ແລະຈົນມະຫາປະໂລຫິດທີ່ຢູ່ໃນສະໄໝນັ້ນໄດ້ຕາຍໄປ; ເວລານັ້ນ
ຜູ້ທີ່ຂ້າຄົນຈະກັບຄືນເມືອເມືອງ ແລະບ້ານຂອງຕົນທີ່ໄດ້ປົບໜີມານັ້ນ

[7]ພວກເຂົາໄດ້ຕັ້ງເມືອງເກເດັດທີ່ຢູ່ໃນແຂວງຄາລີເລຢູ່ພູນັບທາລີ, ເມືອງເຊເຄັມ ຢູ່ພູເອ-
ຟຣາຢິມ, ເມືອງກີຣິອາດ-ອາຣະບາ ຊຶ່ງແມ່ນເຮັບໂຣນຢູ່ພູຢູດາ [8]ແມ່ນ້ຳຢໍແດນເມືອງເຢຣິໂກ
ທາງທິດຕາເວັນອອກ ພວກເຂົາໄດ້ຕັ້ງເມືອງເບເສໃນປ່າເທິງທົ່ງພຽງຂອງເຜົ່າຣູເບັນ, ເມືອງ
ຣາໂມດໃນກີເລອາດຂອງເຜົ່າຄາດ ແລະເມືອງໂກລານໃນແຂວງບາຊານຂອງເຜົ່າມານາເຊ
[9]ບັນດາເມືອງເຫລົ່ານີ້ໄດ້ຖືກຕັ້ງໃຫ້ເປັນເມືອງທີ່ກຳນົດໄວ້ໃຫ້ແກ່ລູກຫລານຊາວອິສຣາເອນທັງ

ໝົດ ແລະແກ່ຄົນຕ່າງດ້າວທີ່ຢູ່ທ່າມກາງພວກເຂົາ ເພື່ອວ່າຄົນທີ່ໄດ້ຂ້າຄົນອື່ນໂດຍບໍ່ເຈດຕະນາ ກໍຈະໄດ້ປົບໜີໄປອາໃສຢູ່ໃນບັນດາເມືອງເຫລົ່ານັ້ນ ເພື່ອຈະລອດຊີວິດຈາກເງື້ອມມືຂອງຜູ້ທີ່ຈະແກ້ແຄ້ນຈົນກວ່າສານຈະຕັດສິນຕໍ່ໜ້າຊຸມຊົນເສຍກ່ອນ.

# ບົດທີ 21

## ເມືອງຕ່າງໆຂອງຊາວເລວີ

1ບັນດາຜູ້ນຳຂອງປູ່ຍ່າຕາຍາຍຊາວ ເລວີ ໄດ້ພາກັນໄປຫາປະໂລຫິດ ເອເລອາຊາ, ໂຢຊວຍ
ລູກຂອງ ນູນ ແລະຜູ້ນຳແຫ່ງປູ່ຍ່າຕາຍາຍຂອງເຜົ່າອິສຣາເອນ 2ໂດຍໄດ້ເວົ້າກັບພວກເພິ່ນຢູ່ທີ່
ເມືອງ ຊີໂລ ໃນແຜ່ນດິນ ການາອານ ວ່າ "ພຣະຜູ້ເປັນເຈົ້າ ໄດ້ສັ່ງຜ່ານທາງ ໂມເຊ ໃຫ້ມອບເມືອງ
ທັງຫລາຍແກ່ພວກເຮົາເພື່ອເປັນບ່ອນຢູ່ອາໃສ ແລະດິນແດນທີ່ຢູ່ນອກເມືອງສຳລັບສັດລ້ຽງຂອງ
ພວກເຮົາ" 3ດັ່ງນັ້ນ ລູກຫລານ ອິສຣາເອນ ໄດ້ມອບສ່ວນມໍລະດົກຂອງພວກເຂົາທີ່ຍັງເຫລືອຄື
ບັນດາເມືອງ ແລະດິນແດນທີ່ຢູ່ຮອບນອກເມືອງໃຫ້ແກ່ພວກ ເລວີ ຕາມຄຳສັ່ງຂອງ ພຣະຜູ້ເປັນ-
ເຈົ້າ

4ສະຫລາກໄດ້ຕົກຖືກເຊື້ອສາຍຊາວ ໂກຮາດ ແລະລູກຫລານ ອາໂຣນ ຜູ້ເປັນປະໂລຫິດໃນ
ຈຳພວກຊາວ ເລວີ ໂດຍໄດ້ຮັບສິບສາມເມືອງຕາມສະຫລາກທີ່ຕົກຖືກ ຊຶ່ງແບ່ງອອກມາຈາກເຜົ່າ
ຢູດາ, ເຜົ່າຊີເມໂອນ ແລະເຜົ່າ ເບັນຢາມິນ 5ສຳລັບລູກຫລານ ໂກຮາດ ຜູ້ອື່ນໆໄດ້ຮັບສິບຕົວ
ເມືອງອີງຕາມສະຫລາກທີ່ຕົກຖືກ ຊຶ່ງແບ່ງອອກມາແຕ່ເຊື້ອສາຍຂອງເຜົ່າ ເອຟຣາຢິມ ຈາກເຜົ່າ
ດານ ແລະຈາກເຜົ່າ ມານາເຊ ເຄິ່ງໜຶ່ງ 6ສ່ວນລູກຫລານ ເກໂຊນ ມີສິບສາມຕົວເມືອງຕາມສະ-
ຫລາກຕົກຖືກໂດຍອອກມາຈາກເຊື້ອສາຍຂອງ ເຜົ່າ ອິດຊາຄາ, ຈາກເຜົ່າ ອາເຊ, ເຜົ່າ ນັບທາລີ
ແລະ ເຄິ່ງ ເຜົ່າ ມານາເຊ ໃນ ບາຊານ 7ສຳລັບລູກຫລານ ເມຣາຣີ ຕາມເຊື້ອສາຍຂອງພວກເຂົາມີ
ສິບສອງຕົວເມືອງ ຊຶ່ງແບ່ງອອກມາຈາກເຜົ່າຣູເບັນ, ເຜົ່າຄາດ ແລະເຜົ່າ ເຊບູລູນ 8ລູກຫລານ
ອິສຣາເອນ ໄດ້ມອບບັນດາເມືອງເຫລົ່ານັ້ນແລະດິນແດນທີ່ຢູ່ອ້ອມນອກເມືອງນັ້ນຕາມສະຫລາກ
ທີ່ໄດ້ຕົກຖືກໃຫ້ແກ່ພວກ ເລວີ ຕາມ ພຣະຜູ້ເປັນເຈົ້າ ໄດ້ສັ່ງຜ່ານທາງ ໂມເຊ

9ການແບ່ງຈາກຕະກູນຢູດາ ແລະຈາກຕະກູນຊີເມໂອນນັ້ນ ພວກເຂົາໄດ້ມອບບັນດາເມືອງ
ທີ່ພວກເຂົາໄດ້ເອີ້ນຕາມຊື່ນັ້ນ 10ໃຫ້ແກ່ລູກຫລານອາໂຣນ, ມອບໃຫ້ຄອບຄົວຊາວ ໂກຮາດ ທີ່ຢູ່
ທ່າມກາງລູກຫລານຊາວ ເລວີ ເນື່ອງຈາກສ່ວນທຳອິດນັ້ນໄດ້ຕົກຖືກພວກເຂົາ 11ພວກລູກ
ຫລານ ອິສຣາເອນ ຈຶ່ງໄດ້ມອບເມືອງ ກີຣິອາດ-ອາຣະບາ ໃຫ້ແກ່ພວກເຂົາ (ອາຣະບາ ເປັນພໍ່ຂອງ
ອານາກ) ຊຶ່ງແມ່ນເມືອງ ເຮັບໂຣນ ທີ່ຢູ່ໃນເຂດພູດອຍຢູດາ ແລະດິນແດນອ້ອມແອ້ມເມືອງນັ້ນ
12ແຕ່ວ່າໝູ່ບ້ານນອກເມືອງນັ້ນ ພວກເຂົາໄດ້ມອບໃຫ້ເປັນກຳມະສິດຂອງ ກາເລັບ ລູກຂອງ ເຢ-
ຟຸນເນ 13ແລະພວກເຂົາໄດ້ມອບເມືອງລີ້ໄພຄື ເມືອງ ເຮັບໂຣນ ແລະດິນແດນອ້ອມແອ້ມເມືອງ
ໃຫ້ລູກຫລານ ອາໂຣນ ຜູ້ເປັນປະໂລຫິດ 14ເມືອງ ລິບນາ ແລະດິນແດນອ້ອມແອ້ມເມືອງນັ້ນ,
ເມືອງ ຢັດຕີ ແລະດິນແດນອ້ອມແອ້ມເມືອງນັ້ນ, ເມືອງ ເອຊະເຕໂມົວ ແລະດິນແດນອ້ອມແອ້ມ
ເມືອງນັ້ນ 15ເມືອງ ໂຮໂລນ ແລະດິນແດນອ້ອມແອ້ມເມືອງນັ້ນ, ເມືອງ ເດບີ ແລະດິນແດນ

ອ້ອມຮອບເມືອງນັ້ນ [16]ເມືອງ ອາອີນ ແລະດິນແດນອ້ອມຮອບເມືອງນັ້ນ, ເມືອງ ຢູຕາ ແລະ
ບັນດາໝູ່ບ້ານນອກເມືອງ, ເບັດ-ເຊເມັດ ແລະບັນດາບ້ານນອກທີ່ຢູ່ເມືອງ ລວມມີເກົ້າເມືອງທີ່
ໄດ້ແຍກອອກມາຈາກສອງຕະກູນລູກຫລານ ຢູດາ ແລະຕະກູນລູກຫລານ ຊີເມໂອນ [17]ດິນແດນ
ທີ່ໄດ້ແບ່ງຈາກເຜົ່າ ເບັນຢາມິນ ມີຄື: ເມືອງ ກິເບໂອນ ແລະໝູ່ບ້ານທີ່ຢູ່ອ້ອມແອ້ມເມືອງ, ເກບາ
ແລະໝູ່ບ້ານທີ່ຢູ່ອ້ອມແອ້ມ [18]ເມືອງ ອານາໂທດ ແລະໝູ່ບ້ານທີ່ຢູ່ອ້ອມແອ້ມ, ເມືອງ ອັນໂມນ
ແລະໝູ່ບ້ານທີ່ຢູ່ອ້ອມແອ້ມ ລວມມີສີ່ເມືອງ [19]ບັນດາເມືອງທີ່ເປັນຂອງລູກຫລານ ອາໂຣນ ຜູ້ເປັນ
ປະໂລຫິດລວມທັງໝົດມີສິບສາມຕົວເມືອງ ແລະໝູ່ບ້ານທີ່ຢູ່ອ້ອມແອ້ມເມືອງເຫລົ່ານັ້ນ

[20]ສຳລັບ ເຊື້ອສາຍ ໂກຮາດ ຊາວ ເລວີ ທີ່ ເຫຼືອຢູ່ ໃນ ທ່າມກາງ ລູກຫລານ ໂກຮາດ ຊຶ່ງບັນດາ
ເມືອງທີ່ຕົກເປັນສ່ວນຂອງພວກເຂົາໄດ້ແບ່ງອອກມາຈາກເຜົ່າ ເອຟຣາຢິມ ເປັນດັ່ງນີ້ [21]ພວກເຂົາ
ໄດ້ມອບເມືອງລີ້ໄພຄື ເມືອງ ເຊເຄັມ ແລະໝູ່ບ້ານທີ່ຢູ່ອ້ອມແອ້ມເມືອງນັ້ນ ຊຶ່ງຢູ່ພູ ເອຟຣາຢິມ,
ເມືອງ ເກເຊ ແລະໝູ່ບ້ານທີ່ຢູ່ອ້ອມແອ້ມນັ້ນ [22]ກິບຊາຢິມ ແລະໝູ່ບ້ານທີ່ອ້ອມແອ້ມ, ເມືອງ
ເບັດ-ໂຮໂຣນ ແລະໝູ່ບ້ານທີ່ຢູ່ອ້ອມແອ້ມນັ້ນ ລວມທັງໝົດມີສີ່ຕົວເມືອງ [23]ສ່ວນແບ່ງທີ່ແບ່ງ
ຈາກເຜົ່າດານ ແມ່ນ ເມືອງ ເອນເຕເກ ແລະໝູ່ບ້ານທີ່ຢູ່ອ້ອມແອ້ມ, ເມືອງ ກິບເບໂທນ ແລະໝູ່
ບ້ານທີ່ຢູ່ອ້ອມແອ້ມ [24]ເມືອງ ອາຢາໂລນ ແລະໝູ່ບ້ານທີ່ຢູ່ອ້ອມແອ້ມ, ເມືອງ ກັດ-ຣິມໂມນ
ແລະໝູ່ບ້ານທີ່ຢູ່ອ້ອມແອ້ມ ລວມທັງໝົດສີ່ຕົວເມືອງ. [25]ສ່ວນແບ່ງທີ່ແບ່ງຈາກເຄິ່ງເຜົ່າ ມານາເຊ
ຄື ເມືອງ ຕາອານັກ ແລະໝູ່ບ້ານທີ່ຢູ່ອ້ອມແອ້ມ, ເມືອງ ກັດ-ຣິມໂມນ ແລະໝູ່ບ້ານທີ່ຢູ່ອ້ອມ-
ແອ້ມ ລວມມີສອງເມືອງ [26]ລວມບັນດາເມືອງທັງໝົດມີສິບເມືອງ ແລະໝູ່ບ້ານທີ່ຢູ່ອ້ອມແອ້ມ
ຊຶ່ງເປັນດິນແດນຂອງເຊື້ອສາຍ ໂກຮາດທີ່ຍັງເຫລືອຢູ່ນັ້ນ

[27]ສ່ວນລູກຫລານ ເກໂຊນທີ່ຢູ່ໃນທ່າມກາງເຊື້ອສາຍພວກ ເລວີ ນັ້ນ ເມືອງລີ້ໄພແມ່ນ ເມືອງ
ໂກລານ ໃນເຂດ ບາຊານ ແລະດິນແດນທີ່ຢູ່ອ້ອມແອ້ມໂດຍແບ່ງອອກມາຈາກເຄິ່ງ ເຜົ່າ ມານາ-
ເຊ, ເມືອງ ເບ-ເອັດເຕຣາ ແລະໝູ່ບ້ານທີ່ຢູ່ອ້ອມແອ້ມລວມມີສອງເມືອງ. [28]ສ່ວນແບ່ງທີ່ແບ່ງ
ອອກມາຈາກເຜົ່າ ອິດຊາຄາ ຄື: ເມືອງ ກີຊີໂອນ ແລະໝູ່ບ້ານທີ່ຢູ່ອ້ອມແອ້ມ ເມືອງ ດາເບຣາດ
ແລະໝູ່ບ້ານທີ່ຢູ່ອ້ອມແອ້ມ, ເມືອງ ຢາຣະມຸດ ແລະໝູ່ບ້ານທີ່ຢູ່ອ້ອມແອ້ມ [29]ເມືອງ ເອັນກັນນິມ
ແລະໝູ່ບ້ານທີ່ຢູ່ອ້ອມແອ້ມ ລວມມີສີ່ຕົວ ເມືອງ [30]ສ່ວນ ແບ່ງທີ່ ແບ່ງອອກຈາກ ເຜົ່າ ອາເຊ ຄື:
ເມືອງ ມີຊານ ແລະໝູ່ບ້ານທີ່ຢູ່ອ້ອມແອ້ມ [31]ເມືອງ ອັບໂດນ ແລະໝູ່ບ້ານທີ່ຢູ່ອ້ອມແອ້ມ, ເມືອງ
ເຮັນກາດ ແລະໝູ່ບ້ານທີ່ຢູ່ອ້ອມແອ້ມ, ເມືອງ ເຣໂຮບ ແລະໝູ່ບ້ານທີ່ຢູ່ອ້ອມແອ້ມ ລວມມີສີ່ຕົວ
ເມືອງ [32]ດິນແດນທີ່ແບ່ງອອກຈາກເຜົ່າ ນັບທາລີ ມີຄື: ເມືອງລີ້ໄພ, ເມືອງ ເກເດັດ ໃນເຂດ ຄາລີ-
ເລ ແລະໝູ່ບ້ານທີ່ຢູ່ອ້ອມແອ້ມ, ເມືອງ ຮຳມົດ-ໂດເຣ ແລະໝູ່ບ້ານທີ່ຢູ່ອ້ອມແອ້ມເມືອງນັ້ນ,
ເມືອງ ກາຣະຕານ ແລະໝູ່ບ້ານທີ່ຢູ່ອ້ອມແອ້ມ ລວມມີສາມຕົວເມືອງ [33]ບັນດາເມືອງຂອງຊາວ
ເກໂຊນ ຕາມເຊື້ອສາຍຂອງພວກເຂົາລວມທັງໝົດມີສິບສາມຕົວເມືອງ ພ້ອມທັງບັນດາໝູ່ບ້ານທີ່-
ຢູ່ອ້ອມແອ້ມເມືອງເຫລົ່ານັ້ນ

[34]ສຳລັບເຊື້ອສາຍຂອງລູກຫລານ ເມຣາຣີ ຊາວ ເລວີ ທີ່ຍັງເຫລືອຢູ່ນັ້ນ ພວກເຂົາໄດ້ແບ່ງສ່ວນ
ຈາກເຜົ່າ ເຊບູລູນ ຄື: ເມືອງ ໂຢກເນອາມ ແລະໝູ່ບ້ານທີ່ຢູ່ອ້ອມແອ້ມເມືອງນັ້ນ, ເມືອງ ກາຣະ-

ຕາ ແລະໝູ່ບ້ານທີ່ຢູ່ອ້ອມແອ້ມ 35ເມືອງດີມນາ ແລະ ໝູ່ບ້ານທີ່ຢູ່ອ້ອມແອ້ມ, ເມືອງນາຮາ-
ລານ ແລະໝູ່ບ້ານທີ່ຢູ່ອ້ອມແອ້ມ ລວມທັງໝົດສີ່ຕົວເມືອງ 36ສ່ວນທີ່ແບ່ງອອກຈາກເຜົ່າຣູເບັນ
ຄື: ເມືອງເບເຊ ແລະໝູ່ບ້ານທີ່ຢູ່ອ້ອມແອ້ມ, ເມືອງຢາຮາດ ແລະໝູ່ບ້ານທີ່ຢູ່ອ້ອມແອ້ມຂອງ
ເມືອງນັ້ນ, ເມືອງເກເດໂມດ ແລະໝູ່ບ້ານທີ່ຢູ່ອ້ອມແອ້ມ 37ເມືອງເມຟະອາດ ແລະໝູ່ບ້ານທີ່ຢູ່
ອ້ອມແອ້ມ ລວມມີສີ່ເມືອງ 38ສ່ວນທີ່ແບ່ງຈາກເຜົ່າຄາດຄື: ເມືອງລີ້ໄພ, ເມືອງຣາໂມດໃນດິນ-
ແດນກີເລອາດ ແລະໝູ່ບ້ານທີ່ຢູ່ອ້ອມແອ້ມ, ເມືອງມາຮານາຢິມ ແລະໝູ່ບ້ານທີ່ຢູ່ອ້ອມແອ້ມ
39ເມືອງເຮັດຊະໂບນ ແລະໝູ່ບ້ານທີ່ຢູ່ອ້ອມຮອບ, ເມືອງຢາເຊ ແລະໝູ່ບ້ານທີ່ຢູ່ອ້ອມແອ້ມ
ລວມທັງໝົດສີ່ເມືອງ 40ເມືອງຕ່າງໆທີ່ເປັນຂອງລູກຫລານເມຣາຣີ ຕາມເຊື້ອສາຍຂອງພວກ
ເລວີທີ່ຍັງເຫລືອຢູ່ມີສິບສອງເມືອງ

41ບັນດາເມືອງຂອງພວກເລວີໃນສ່ວນມໍລະດົກຂອງລູກຫລານອິສຣາເອນມີທັງໝົດສີ່ສິບ
ແປດເມືອງ ແລະໝູ່ບ້ານຕ່າງໆທີ່ຢູ່ອ້ອມແອ້ມບັນດາເມືອງເຫລົ່ານັ້ນ 42ທຸກໆເມືອງມີໝູ່ບ້ານຢູ່
ອ້ອມຮອບ; ແລະແຕ່ລະເມືອງກໍເປັນດັ່ງນັ້ນ

### ຊາວອິສຣາເອນຍຶດດິນແດນທັງໝົດເປັນກຳມະສິດ

43ພຣະຜູ້ເປັນເຈົ້າໄດ້ໂຜດໃຫ້ພວກອິສຣາເອນໄດ້ຮັບແຜ່ນດິນທັງໝົດທີ່ພຣະອົງໄດ້ຊົງສັນ-
ຍາວ່າຈະປະທານໃຫ້ແກ່ປູ່ຍ່າຕາຍາຍຂອງພວກເຂົາ ແລະພວກເຂົາໄດ້ຮັບແຜ່ນດິນເຫລົ່ານັ້ນ
ເປັນກຳມະສິດ ແລະອາໄສຢູ່ໃນສະຖານທີ່ເຫລົ່ານັ້ນ 44ພຣະຜູ້ເປັນເຈົ້າໄດ້ໂຜດໃຫ້ພວກເຂົາມີ
ຄວາມສະຫງົບສຸກໃນທຸກທີ່ທຸກບ່ອນຕາມທີ່ພຣະອົງໄດ້ຊົງສັນຍາໄວ້ກັບບັນພະບູລຸດຂອງພວກ
ເຂົາ ບໍ່ມີສັດຕູຄົນໃດທີ່ສາມາດຕໍ່ສູ້ກັບພວກເຂົາໄດ້ ພຣະຜູ້ເປັນເຈົ້າໄດ້ມອບເຫລົ່າສັດຕູໄວ້ໃນ
ກຳມືຂອງພວກເຂົາ 45ຖ້ອຍຄຳອັນປະເສີດທັງໝົດທີ່ພຣະຜູ້ເປັນເຈົ້າໄດ້ຊົງສັນຍາແກ່ເຊື້ອສາຍ
ອິສຣາເອນໄວ້ນັ້ນ ບໍ່ມີຂໍ້ໜຶ່ງຂໍ້ໃດທີ່ບໍ່ເປັນຈິງ ທຸກໆຖ້ອຍຄຳທີ່ພຣະອົງຊົງກ່າວນັ້ນເປັນຈິງແລະ
ສຳເລັດທັງໝົດ

## ບົດທີ 22

1ເມື່ອນັ້ນໂຢຊວຍໄດ້ເອີ້ນຊາວຣູເບັນ, ຊາວຄາດ ແລະຊາວມານາເຊເຄິ່ງເຜົ່າມາ 2ເພິ່ນໄດ້
ກ່າວແກ່ພວກເຂົາວ່າ “ຖ້ອຍຄຳທັງຫລາຍທີ່ໂຢຊວຍຜູ້ຮັບໃຊ້ຂອງພຣະຜູ້ເປັນເຈົ້າໄດ້ສັ່ງໄວ້ແກ່
ພວກທ່ານ; ພວກທ່ານໄດ້ຖືກຮັກສາ ແລະໄດ້ຟັງຄວາມເຮົາໃນສິ່ງສາລະພັດທີ່ເຮົາໄດ້ສັ່ງແກ່
ພວກທ່ານ 3ເປັນເວລາດົນນານທີ່ພວກທ່ານບໍ່ໄດ້ປະຖິ້ມບັນດາພີ່ນ້ອງຂອງພວກທ່ານຈົນເຖິງທຸກ
ມື້ນີ້ ແລະທຸກໆສິ່ງທີ່ພຣະຜູ້ເປັນເຈົ້າ ພຣະເຈົ້າຂອງທ່ານໄດ້ສັ່ງແກ່ໂຢຊວຍໃຫ້ຖືຮັກສາ ທ່ານ
ກໍໄດ້ຮັກສາໄວ້. 4ບັດນີ້ ພຣະຜູ້ເປັນເຈົ້າ ພຣະເຈົ້າຂອງທ່ານໄດ້ໂຜດໃຫ້ພີ່ນ້ອງທັງຫລາຍຂອງ
ທ່ານມີຄວາມສະຫງົບສຸກຕາມທີ່ພຣະອົງໄດ້ຊົງສັນຍາໄວ້ ແລະບັດນີ້ ຈົ່ງກັບຄືນໄປທີ່ຄ້າຍພັກ-
ອາໄສຂອງພວກທ່ານໃນແຜ່ນດິນທີ່ໂມເຊຂ້າໃຊ້ຂອງພຣະຜູ້ເປັນເຈົ້າໄດ້ປະທານໃຫ້ແກ່ພວກ
ທ່ານທີ່ຢູ່ແມ່ນໍ້າຢໍແດນຟາກນັ້ນ 5ແຕ່ຈົ່ງລະວັງໃຫ້ດີໃຫ້ປະຕິບັດຕາມຄຳສັ່ງ ແລະພຣະບັນຍັດທີ່
ໂມເຊຜູ້ຮັບໃຊ້ຂອງພຣະຜູ້ເປັນເຈົ້າ ໄດ້ສັ່ງແກ່ພວກທ່ານແລ້ວ ຈົ່ງຮັກພຣະຜູ້ເປັນເຈົ້າ ພຣະ-

ເຈົ້າຂອງທ່ານ ແລະດຳເນີນໃນທຸກໆວິທີທາງຂອງພຣະອົງ ແລະຮັກສາບັນດາຄຳສັ່ງທັງຫລາຍ
ຂອງພຣະອົງ, ຕິດສະໜິດກັບພຣະອົງ ແລະບົວລະບັດຮັບໃຊ້ພຣະອົງດ້ວຍສຸດຈິດສຸດໃຈຂອງ
ພວກທ່ານ”

6ໂຢຊວຍໄດ້ອວຍພອນໃຫ້ແກ່ພວກເຂົາ ແລະພວກເຂົາກໍໄດ້ກັບຄືນເມືອທີ່ຄ້າຍພັກອາໃສທັງ-
ຫລາຍຂອງຕົນ 7ໂມເຊໄດ້ມອບດິນທີ່ເປັນມໍລະດົກໃຫ້ເຜົ່າມານາເຊເຄິ່ງໜຶ່ງໃນແຂວງບາຊານ
ແລະອີກເຄິ່ງເຜົ່ານັ້ນເພິ່ນໄດ້ມອບດິນມໍລະດົກໃຫ້ພວກເຂົາເປັນກຳມະສິດດ້ວຍກັນກັບພີ່ນ້ອງ
ທັງຫລາຍຂອງພວກເຂົາທີ່ແມ່ນ້ຳຢໍແດນທາງທິດຕາເວັນຕົກຟາກນີ້ 8ເມື່ອໂຢຊວຍໄດ້ໃຫ້ພວກ
ເຂົາກັບເມືອທີ່ຄ້າຍພັກອາໃສ ເພິ່ນໄດ້ອວຍພອນໃຫ້ພວກເຂົາທັງຫລາຍ ແລະເວົ້າວ່າ “ພວກ
ທ່ານກຳລັງຈະກັບຄືນເມືອຄ້າຍພັກອາໃສຂອງພວກທ່ານ ຈົ່ງຮັກສາສົມບັດທັງໝົດ ແລະບັນດາ
ຝູງສັດ, ເງິນ, ຄຳ, ທອງເຫລືອງ, ເຫລັກພ້ອມທັງບັນດາເຄື່ອງນຸ່ງຫົ່ມ, ຈົ່ງເອົາບັນດາສິ່ງຂອງ
ທີ່ຮິບໂຮມມາໄດ້ຈາກພວກສັດຕູຂອງພວກທ່ານແບ່ງປັນໃຫ້ແກ່ພວກພີ່ນ້ອງຂອງພວກທ່ານສາ”
9ລູກຫລານຣູເບັນ, ລູກຫລານຄາດ, ເຜົ່າມານາເຊເຄິ່ງເຜົ່າໄດ້ກັບຄືນເມືອ ແລະໄດ້ແຍກຈາກ
ລູກຫລານອິສຣາເອນຢູ່ທີ່ເມືອງຊີໂລໃນແຜ່ນດິນການາອານ ໄປສູ່ດິນແດນກີເລອາດ ຊຶ່ງເປັນ
ດິນແດນທີ່ພວກເຂົາໄດ້ຮັບເປັນກຳມະສິດຕາມຄຳສັ່ງຂອງພຣະຜູ້ເປັນເຈົ້າໂດຍຜ່ານທາງໂມເຊ

10ເມື່ອພວກເຂົາໄດ້ໄປເຖິງເຂດແດນຂອງແມ່ນ້ຳຢໍແດນ ຊຶ່ງຢູ່ໃນດິນແດນການາອານ
11ພວກລູກຫລານຣູເບັນ, ລູກຫລານຄາດ, ເຄິ່ງເຜົ່າມານາເຊກໍໄດ້ພາກັນສ້າງແທ່ນບູຊາຂຶ້ນໃນ
ບ່ອນນັ້ນທີ່ຢູ່ໃກ້ກັບແມ່ນ້ຳຢໍແດນຊຶ່ງເປັນບ່ອນເຜົາບູຊາທີ່ໃຫຍ່ຫລາຍ 12ເມື່ອລູກຫລານອິສຣາ-
ເອນໄດ້ຍິນເຊັ່ນນັ້ນ ພວກເຂົາກໍໄດ້ມາໂຮມກັນໃນເມືອງຊີໂລເຮັດເສິກຕໍ່ສູ້ກັບພວກເຂົາ

13ແລ້ວລູກຫລານອິສຣາເອນໄດ້ໃຊ້ຟີເນຣາດລູກປະໂລຫິດເອເລອາຊາໄປຫາລູກຫລານຣູ-
ເບັນ, ຄາດແລະເຄິ່ງເຜົ່າມານາເຊໃນແຜ່ນດິນກີເລອາດ 14ແລະພວກຜູ້ນຳສິບຄົນໄດ້ໄປກັບ
ຟີເນຣາດ, ຜູ້ນຳແຕ່ລະຄົນແມ່ນມາຈາກເຊື້ອສາຍປູ່ຍ່າຕາຍາຍຂອງຕະກູນອິສຣາເອນທັງໝົດ
ຊຶ່ງນັບເປັນພັນໆ 15ພວກເຂົາໄດ້ໄປຫາພວກລູກຫລານຣູເບັນ, ລູກຫລານຄາດ ແລະເຜົ່າມາ-
ນາເຊໃນແຜ່ນດິນກີເລອາດ ແລະໄດ້ເວົ້າກັບພວກເຂົາວ່າ 16“ບັນດາພວກຊຸມນຸມຊົນຂອງ
ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ວ່າ: ການລະເມີດນີ້ເປັນຢ່າງໃດ? ທີ່ພວກທ່ານໄດ້ເຮັດຕໍ່ສູ້ພຣະ-
ເຈົ້າຂອງຊາວອິສຣາເອນດ້ວຍການຫລີກໜີຈາກພຣະຜູ້ເປັນເຈົ້າດ້ວຍການກໍ່ສ້າງແທ່ນບູຊາ
ສຳລັບພວກທ່ານ ຊຶ່ງເປັນການກະບົດຕໍ່ສູ້ພຣະຜູ້ເປັນເຈົ້າໃນມື້ນີ້ 17ຫຼືວ່າມີໄພວິບັດທີ່ມາຖືກ
ພວກຊຸມນຸມຂອງພຣະຜູ້ເປັນເຈົ້ານັ້ນ ເປັນການໜ້ອຍຫລື? ເປັນຫຍັງໃນມື້ນີ້ພວກທ່ານຈຶ່ງຫັນ
ຫລັງໜີຈາກພຣະຜູ້ເປັນເຈົ້າແບບນີ້? 18ແຕ່ຖ້າພວກທ່ານກະບົດຕໍ່ສູ້ພຣະຜູ້ເປັນເຈົ້າໃນມື້ນີ້
ພຣະອົງຈະໂກດຮ້າຍຕໍ່ບັນດາພວກຊຸມນຸມອິສຣາເອນໃນມື້ໜ້າ 19ຖ້າແຜ່ນດິນຂອງພວກທ່ານ
ເປັນອັນຕະລາຍ ຈົ່ງເຂົ້າໄປໃນແຜ່ນດິນຂອງພຣະຜູ້ເປັນເຈົ້າຊຶ່ງທີ່ສະຖິດຂອງພຣະຜູ້ເປັນເຈົ້າ
ຕັ້ງຢູ່ ແລະແບ່ງເອົາດິນມໍລະດົກຂອງພວກທ່ານໃນທ່າມກາງພວກເຮົາ, ຂໍພຽງວ່າຢ່າກະບົດຕໍ່ສູ້
ພຣະຜູ້ເປັນເຈົ້າ ແລະຢ່າກະບົດຕໍ່ສູ້ພວກເຮົາດ້ວຍການກໍ່ສ້າງແທ່ນບູຊາແທ່ນອື່ນແທນແທ່ນບູ-
ຊາຂອງພຣະຜູ້ເປັນເຈົ້າ ພຣະເຈົ້າຂອງພວກເຮົາ 20ອາຄານຊຶ່ງເປັນລູກຂອງເຊຣາໄດ້ກະບົດ

ດ້ວຍການເກັບຮັກສາຮູບເຄົາລົບໄວ້ບໍ່ແມ່ນບໍ? ແລະມີພຣະພິໂລດບັງເກີດຂຶ້ນຕໍ່ສູ້ບັນດາພວກ
ຊຸມນຸມຊົນຊາວອິສຣາເອນ ແລະອາຄານໄດ້ຕາຍບໍ່ພຽງແຕ່ຜູ້ດຽວຍ້ອນການເຮັດຊົ່ວຂອງລາວ"
21ພວກລູກຫລານຣູເບັນ, ລູກຫລານຄາດ, ເຄິ່ງເຜົ່າມານາເຊໄດ້ຕອບ ແລະກ່າວແກ່ພວກ
ຜູ້ນຳພັນຄົນຂອງຊາວອິສຣາເອນວ່າ 22ພຣະຜູ້ເປັນເຈົ້າ ພຣະເຈົ້າຂອງພະທັງຫລາຍ, ພຣະ-
ອົງຊົງຮູ້ຈັກ ແລະຊາວອິສຣາເອນກໍຈະຮູ້ຈັກ ຖ້າເປັນການກະບົດ ເປັນການຊົ່ວຮ້າຍຕໍ່ສູ້ພຣະ-
ຜູ້ເປັນເຈົ້າ ຂໍຢ່າຊ່ວຍພວກເຮົາໃຫ້ພົ້ນໃນມື້ນີ້ເລີຍ 23ຖ້າພວກເຮົາໄດ້ສ້າງແທ່ນບູຊາແທ່ນໜຶ່ງ
ເພື່ອຫລີກໜີຈາກພຣະຜູ້ເປັນເຈົ້າ ຫລືຖ້າເຮັດຢ່າງນັ້ນ ເພື່ອຈະໄດ້ເຜົາເຄື່ອງຖວາຍບູຊາ ແລະ
ຖວາຍເຂົ້າໜົມ? ຫລືເພື່ອຈະໄດ້ຖວາຍເຄື່ອງບູຊາໂມທະນາພຣະຄຸນຂອງພຣະຜູ້ເປັນເຈົ້າ ຂໍ
ໃຫ້ພຣະຜູ້ເປັນເຈົ້າຊົງຮຽກຮ້ອງເອົາການນັ້ນ 24ພວກເຮົາເຮັດຢ່າງນີ້ກໍເພື່ອວ່າຕໍ່ໜ້າໄປ ບັນດາ
ພວກລູກຫລານຂອງທ່ານຈະເວົ້າກັບລູກຫລານຂອງພວກເຮົາວ່າ "ພວກທ່ານມີສ່ວນກ່ຽວຂ້ອງ
ກັບພຣະຜູ້ເປັນເຈົ້າ ພຣະເຈົ້າຂອງພວກອິສຣາເອນໃນຂໍ້ໃດ 25ພຣະຜູ້ເປັນເຈົ້າໄດ້ໃຫ້ແມ່ນ້ຳ
ຢໍແດນ ເປັນເຂດແດນລະຫວ່າງກາງພວກເຮົາກັບພວກທ່ານ ຊຶ່ງພຣະຜູ້ເປັນເຈົ້າບໍ່ໄດ້ໃຫ້ລູກ
ຫລານຣູເບັນ, ລູກຫລານຄາດມີສ່ວນນຳ, ຖ້າຢ່າງນັ້ນລູກຫລານຂອງພວກທ່ານຈະພາລູກ
ຫລານຂອງຢູດາເຊົາຢຳເກງພຣະຜູ້ເປັນເຈົ້າ 26ພວກເຮົາໄດ້ເວົ້າກັນວ່າ "ຈົ່ງພາກັນກໍ່ສ້າງແທ່ນ
ບູຊາແທ່ນໜຶ່ງຂຶ້ນບໍ່ແມ່ນເພື່ອເຜົາຖວາຍບູຊາ ຫລືສຳລັບເຄື່ອງບູຊາຕ່າງໆ" 27ແຕ່ສິ່ງນັ້ນເພື່ອ
ເປັນພະຍານລະຫວ່າງກາງພວກເຮົາກັບ ພວກທ່ານ ແລະລະຫວ່າງເຊື້ອສາຍຂອງພວກເຮົາຕໍ່
ໄປພາຍໜ້າ ເພື່ອພວກເຂົາຈະໄດ້ບົວລະບັດພຣະຜູ້ເປັນເຈົ້າຕໍ່ພຣະພັກພຣະອົງ ດ້ວຍເຄື່ອງເຜົາ
ບູຊາແລະດ້ວຍເຄື່ອງບູຊາຕ່າງໆ ແລະເຄື່ອງບູຊາໂມທະນາພຣະຄຸນຈາກພວກເຮົາ ເມື່ອຕໍ່ໄປ
ພາຍໜ້າ ພວກລູກຫລານຂອງພວກທ່ານຈະບໍ່ບອກພວກລູກຫລານຂອງພວກເຮົາວ່າ "ພວກ
ທ່ານບໍ່ມີສ່ວນນຳພຣະຜູ້ເປັນເຈົ້າ" 28ພວກເຮົາໄດ້ເວົ້າກັນວ່າ "ຖ້າພວກເຂົາຈະເວົ້າຢ່າງນັ້ນແກ່
ພວກເຮົາ ແລະແກ່ເຊື້ອສາຍຂອງພວກເຮົາໃນຕໍ່ໜ້າ ພວກເຮົາຈະບອກພວກເຂົາວ່າ ຈົ່ງເບິ່ງ
ແທ່ນບູຊາຂອງພຣະຜູ້ເປັນເຈົ້າທີ່ປູ່ຍ່າຕາຍາຍຂອງພວກເຮົາໄດ້ກໍ່ສ້າງ ບໍ່ແມ່ນພຽງແຕ່ສຳລັບ
ເຜົາຖວາຍບູຊາເທົ່ານັ້ນ ແຕ່ສຳລັບເຄື່ອງຖວາຍບູຊາອື່ນໆນຳອີກ ຊຶ່ງເປັນພະຍານລະຫວ່າງ
ພວກເຮົາກັບພວກທ່ານ" 29ຂໍໃຫ້ເລື່ອງນີ້ຫ່າງໄກຈາກເຮົາເຖີດຄື: ທີ່ພວກເຮົາຈະກະບົດຕໍ່ສູ້
ພຣະຜູ້ເປັນເຈົ້າ ແລະຫັນໜີຈາກພຣະຜູ້ເປັນເຈົ້າໃນມື້ນີ້ ດ້ວຍການກໍ່ສ້າງແທ່ນບູຊາແທ່ນອື່ນ
ສຳລັບເຜົາເຄື່ອງຖວາຍບູຊາ, ເຜົາຖວາຍເຂົ້າໜົມ ແລະສຳລັບເຄື່ອງບູຊາຕ່າງໆນອກຈາກແທ່ນ
ບູຊາຂອງພຣະຜູ້ເປັນເຈົ້າ ພຣະເຈົ້າຂອງພວກເຮົາທີ່ຢູ່ຕໍ່ໜ້າຫໍເຕັນຂອງພຣະອົງນັ້ນ"
30ປະໂລຫິດພີເນຮາດ ແລະບັນດາຜູ້ນຳຂອງຊຸມນຸມຊົນແລະຫົວໜ້າພັນຄົນທີ່ໄດ້ຢູ່ນຳເພິ່ນ
ເມື່ອໄດ້ຍິນບັນດາຖ້ອຍຄຳທີ່ລູກຫລານຣູເບັນ, ລູກຫລານຄາດ ແລະລູກຫລານມານາເຊໄດ້
ກ່າວຢ່າງນັ້ນ ພວກເຂົາກໍໄດ້ເຫັນດີໃນສິ່ງນັ້ນ 31ພີເນຮາດລູກຂອງປະໂລຫິດເອເລອາຊາໄດ້
ກ່າວແກ່ລູກຫລານຣູເບັນ, ລູກຫລານຄາດແລະລູກຫລານມານາເຊວ່າ "ໃນມື້ນີ້ພວກເຮົາໄດ້ຮູ້-
ຈັກວ່າພຣະຜູ້ເປັນເຈົ້າສະຖິດຢູ່ໃນທ່າມກາງພວກເຮົາເພາະວ່າພວກທ່ານບໍ່ໄດ້ເຮັດການລະເມີດ
ຕໍ່ສູ້ພຣະຜູ້ເປັນເຈົ້າ ແຕ່ພວກທ່ານໄດ້ຊ່ວຍລູກຫລານອິສຣາເອນໃຫ້ພົ້ນຈາກພຣະຫັດຂອງ

ພຣະຜູ້ເປັນເຈົ້າ”
[32]ຟີເນຮາດ ລູກຂອງປະໂລຫິດ ເອເລອາຊາ ກັບພວກຜູ້ນຳກໍໄດ້ພາກັນລາຈາກ ລູກຫລານຣູ-
ເບັນ, ລູກຫລານຄາດ ແລະລູກຫລານມານາເຊ ໃນດິນແດນກີເລອາດ ກັບຄືນເມືອແຜ່ນດິນ
ການາອານ ຫາລູກຫລານ ອິສຣາເອນ ແລະ ເລົ່າກ່ຽວກັບ ເລື່ອງ ເຫລົ່ານັ້ນ ໃຫ້ ແກ່ພວກ ເຂົາ ຟັງ
[33]ລູກຫລານອິສຣາເອນໄດ້ເຫັນດີໃນສິ່ງນັ້ນ ແລະພາກັນສັນລະເສີນພຣະເຈົ້າ ໂດຍບໍ່ຄິດທີ່ຈະ
ໄປຕໍ່ສູ້ກັບພວກເຂົາໃນແຜ່ນດິນທີ່ລູກຫລານຣູເບັນ, ລູກຫລານຄາດໄດ້ໄປອາໃສຢູ່ນັ້ນ [34]ລູກ
ຫລານຣູເບັນ ແລະລູກຫລານຄາດໄດ້ໃສ່ຊື່ໃຫ້ແທ່ນບູຊານັ້ນວ່າ ແທ່ນພະຍານເພາະວ່າແທ່ນ
ນັ້ນເປັນພະຍານລະຫວ່າງກາງພວກເຮົາວ່າ ພຣະຜູ້ເປັນເຈົ້າຊົງເປັນພຣະເຈົ້າ

# ບົດທີ 23

## ໂຢຊວຍແນະນຳປະຊາຊົນ

[1]ຫລັງຈາກພຣະຜູ້ເປັນເຈົ້າຊົງໂຜດໃຫ້ພວກອິສຣາເອນ ຢູ່ຢ່າງສະຫງົບສຸກກັບພວກສັດຕູທີ່-
ຢູ່ອ້ອມຮອບເປັນເວລາເຫິງແລ້ວ ໂຢຊວຍກໍເຖົ້າແກ່ຫລາຍ. [2]ເພິ່ນຈຶ່ງເອີ້ນພວກອິສຣາເອນທຸກ
ຄົນ ຄືພວກເຖົ້າແກ່ ພວກຫົວໜ້າ ພວກຜູ້ຕັດສິນ ພວກເຈົ້າໜ້າທີ່ ແລະປະຊາຊົນມາແລ້ວ ເວົ້າ
ວ່າ, “ດຽວນີ້ ຂ້າພະເຈົ້າກໍເຖົ້າຫລາຍແລ້ວ. [3]ຝ່າຍພວກທ່ານກໍເຫັນທຸກໆ ສິ່ງທີ່ພຣະຜູ້ເປັນເຈົ້າ
ຂອງພວກທ່ານ ໄດ້ຊົງເຮັດຕໍ່ຊົນຊາດທັງປວງເພື່ອຊ່ອຍພວກທ່ານ. [4]ແມ່ນພຣະຜູ້ເປັນເຈົ້າເອງ
ທີ່ເຮັດເສິກເພື່ອພວກທ່ານ ຈົ່ງຟັງເດີ້ ຂ້າພະເຈົ້າໄດ້ຈັດເອົາດິນຂອງຊົນຊາດຕ່າງໆ ທີ່ຍຶດເອົາ
ໄດ້ແລ້ວ ແລະທີ່ຍັງບໍ່ທັນຍຶດໄດ້ມອບໃຫ້ເປັນສ່ວນຂອງຕະກູນທັງຫລາຍຂອງພວກທ່ານ ຊຶ່ງ
ເປັນດິນລະຫວ່າງແມ່ນ້ຳຢໍແດນທາງຕາເວັນອອກ ກັບທະເລເມດີແຕຣາເນທາງຕາເວັນຕົກ.
[5]ພຣະຜູ້ເປັນເຈົ້າຂອງພວກທ່ານຈະຊົງຂັບໄລ່ຊົນຊາດເຫລົ່ານັ້ນຖອຍໜີຈາກພວກທ່ານ ແລະ
ພວກທ່ານຈະໄດ້ແຜ່ນດິນຂອງພວກເຂົາຕາມທີ່ພຣະອົງຊົງສັນຍາໄວ້. [6]ດັ່ງນັ້ນ ຈົ່ງຕັ້ງໃຈ ແລະ
ເຮັດຕາມທຸກໆ ສິ່ງທີ່ຂຽນໄວ້ໃນປຶ້ມພຣະທຳຂອງເຮົາ ຊຶ່ງໂມເຊໄດ້ສັ່ງໄວ້. [7]ຢ່າປະຖິ້ມຂໍ້ໜຶ່ງຂໍ້
ໃດ ເພື່ອວ່າພວກທ່ານຈະບໍ່ເຂົ້າສ່ວນກັບປະຊາຊາດຕ່າງໆ ທີ່ຢູ່ກັບພວກທ່ານ ຫລືຮ້ອງຫາພະ
ຂອງພວກເຂົາ ແລະສາບານໃນນາມຂອງພະນັ້ນ ພ້ອມທັງບົວລະບັດຂາບໄຫວ້ມັນ. [8]ຈົ່ງສັດຊື່ຕໍ່
ພຣະຜູ້ເປັນເຈົ້າຂອງພວກທ່ານຕາມທີ່ເຄີຍປະຕິບັດມາແລ້ວຈົນເທົ່າທຸກມື້ນີ້.
[9]ເພາະພຣະຜູ້ເປັນເຈົ້າຊົງໃຫ້ຊົນຊາດທີ່ສຳຄັນ ແລະແຂງແຮງໜີຈາກພວກທ່ານ ແລະຍັງບໍ່
ທັນມີຜູ້ໃດສາມາດຕໍ່ສູ້ພວກທ່ານໄດ້. [10]ຄົນໜຶ່ງໃນພວກທ່ານກໍສາມາດຂັບໄລ່ຄົນອອກຈາກພວກ
ທ່ານໄດ້ ເພາະວ່າພຣະຜູ້ເປັນເຈົ້າຂອງພວກທ່ານຊົງເຮັດເສິກເພື່ອພວກທ່ານ ຕາມທີ່ພຣະອົງ
ຊົງສັນຍາໄວ້. [11-12]ຈົ່ງຮັກພຣະຜູ້ເປັນເຈົ້າຂອງພວກທ່ານ ຖ້າວ່າພວກທ່ານປະຖິ້ມພຣະເຈົ້າ
ແລະກັບຄືນໄປຕິດຕໍ່ກັບຊົນຊາດທີ່ຢູ່ກັບພວກທ່ານ ແລະແຕ່ງງານກັບພວກເຂົາ. [13]ໃຫ້ພວກ
ທ່ານຮູ້ໄວ້ຢ່າງແນ່ນອນວ່າ ພຣະຜູ້ເປັນເຈົ້າຂອງພວກທ່ານຈະບໍ່ຂັບໄລ່ພວກເຂົາໜີຈາກພວກ
ທ່ານອີກຕໍ່ໄປ ພວກເຂົາຈະເປັນຄືແຮ້ວ ແລະຫລຸມດັກຈັບໃຫ້ພວກທ່ານໄດ້ຮັບອັນຕະລາຍ
ແລະເປັນຄືໄມ້ແສ້ຂ້ຽນຫລັງ ຫລືສຽນຢູ່ໃນຕາ ທີ່ເຮັດ ໃຫ້ພວກທ່ານໄດ້ຮັບຄວາມເຈັບປວດ ຈົນ

ພວກທ່ານຈະສູນຫາຍໄປຈາກແຜ່ນດິນອັນຈົບງາມນີ້ ຊຶ່ງພຣະຜູ້ເປັນເຈົ້າຂອງພວກທ່ານໄດ້
ມອບໃຫ້.
[14]ດຽວນີ້ ຂ້າພະເຈົ້າກໍຢູ່ໃນຂັ້ນຂອງຄວາມຕາຍແລ້ວ ທຸກໆ ຄົນກໍຮູ້ແກ່ຈິດໃຈແລ້ວວ່າ
ພຣະຜູ້ເປັນເຈົ້າຂອງພວກທ່ານຊົງປະທານສິ່ງທີ່ດີໆ ທຸກຢ່າງໃຫ້ແກ່ພວກທ່ານຕາມທີ່ຊົງສັນຍາ
ໄວ້ ແລະທຸກສິ່ງທີ່ພຣະອົງຊົງສັນຍາໄວ້ບໍ່ມີຂໍ້ໃດທີ່ບໍ່ເປັນຈິງ. [15-16]ດຽວນີ້ພຣະຜູ້ເປັນເຈົ້າຂອງ
ພວກທ່ານຊົງເຮັດສິ່ງທີ່ດີໆ ທຸກຢ່າງໃຫ້ຕາມທີ່ຊົງກ່າວໄວ້ ແຕ່ວ່າຖ້າພວກທ່ານບໍ່ຖືຮັກສາຄຳ
ສັນຍາທີ່ພຣະອົງຊົງສັ່ງໄວ້ ໄປຮັບໃຊ້ ແລະຂາບໄຫວ້ພະອົງອື່ນ ພຣະອົງຈະຊົງລົງໂທດພວກ
ທ່ານທຸກຄົນ ຈົນວ່າທຸກໆ ຄົນຈະຈິບຫາຍໄປຈາກແຜ່ນດິນທີ່ຈົບງາມ ຊຶ່ງພຣະອົງຊົງປະທານ
ໃຫ້ແກ່ພວກທ່ານ.”

# ບົດທີ 24

## ໂຢຊວຍແນະນຳພວກອິສຣາເອນທີ່ເມືອງເຊເຄັມ

[1]ຕໍ່ມາ ໂຢຊວຍໄດ້ເອີ້ນພວກຕະກູນອິສຣາເອນເຂົ້າມາໂຮມກັນຢູ່ເມືອງເຊເຄັມ ເພິ່ນໄດ້ເອີ້ນ
ເອົາພວກເຖົ້າແກ່ ພວກຫົວໜ້າພວກຜູ້ຕັດສິນ ພວກເຈົ້າໜ້າທີ່ ແລະປະຊາຊົນມາ ແລ້ວຈຶ່ງພາ-
ກັນໄປເຝົ້າພຣະເຈົ້າ. [2]ໂຢຊວຍເວົ້າຕໍ່ຄົນເຫລົ່ານັ້ນວ່າ, “ພຣະຜູ້ເປັນເຈົ້າຂອງພວກອິສຣາເອນ
ຊົງກ່າວດັ່ງນີ້ ເປັນເວລາດົນນານແລ້ວ ປູ່ຍ່າຕາຍາຍຂອງພວກເຈົ້າ ທີ່ຢູ່ຟາກແມ່ນ້ຳເອຟຣາດ
ເບື້ອງນັ້ນໄດ້ຂາບໄຫວ້ພະອື່ນ ເຕຣາ ຊຶ່ງເປັນພໍ່ຂອງອັບຣາຮາມ ແລະນາໂຮກໍເປັນຜູ້ໜຶ່ງທີ່
ຮ່ວມຢູ່ນຳພວກປູ່ຍ່າຕາຍາຍນີ້. [3]ດັ່ງນີ້ ເຮົາຈຶ່ງພາອັບຣາຮາມພໍ່ຂອງພວກເຈົ້າອອກຈາກແຜ່ນ-
ດິນນັ້ນ ຂ້າມແມ່ນ້ຳເອຟຣາດ ແລະຜ່ານໄປທົ່ວປະເທດການາອານ ເຮົາໄດ້ໃຫ້ເຊື້ອສາຍຂອງ
ລາວທະວີຫລາຍຂຶ້ນ. [4]ໂດຍໃຫ້ລາວມີລູກຜູ້ໜຶ່ງຊື່ວ່າ ອີຊາກ ແລະໄດ້ປະທານລູກໃຫ້ອີຊາກ
ຄືຢາໂຄບກັບເອຊາວ ຕໍ່ມາກໍມອບເຂດພູເສອີໃຫ້ເປັນ ສ່ວນຂອງເອຊາວ ສ່ວນຢາໂຄບກັບ
ລູກຫລານຂອງລາວໄດ້ລົງໄປທາງປະເທດເອຢິບ. [5]ແລ້ວເຮົາໄດ້ສົ່ງໂມເຊ ແລະອາໂຣນໄປ
ປະເທດເອຢິບ ເຮົາໄດ້ນຳເອົາໄພພິບັດອັນຍິ່ງໃຫຍ່ໄປສູ່ປະເທດນັ້ນ ຕໍ່ມາ ເຮົາໄດ້ນຳພວກເຈົ້າ
ອອກມາ. [6]ແລະເຮົາໄດ້ພາພໍ່ແມ່ຂອງພວກເຈົ້າອອກຈາກປະເທດເອຢິບ ແລ້ວທຸກໆ ຄົນຈຶ່ງມາ
ເຖິງທະເລແດງ ຝ່າຍພວກເອຢິບກໍຂັບລົດ ຮົບອອກໄລ່ຕິດຕາມພວກເຮົາລົງຮອດນ້ຳທະເລ.
[7]ເມື່ອພວກເຂົາອ້ອນວອນຮ້ອງຫາເຮົາ ເຮົາກໍບັນດານໃຫ້ຄວາມມືດຂັ້ນກາງລະຫວ່າງພວກເຂົາ
ແລະພວກເອຢິບ ແລະໃຫ້ນ້ຳທະເລໄຫລຖ້ວມພວກເອຢິບ ດັ່ງນັ້ນ ພວກເຈົ້າກໍເຫັນສິ່ງທີ່ເຮົາ
ກະທຳຕໍ່ປະເທດເອຢິບແລ້ວ ຫລັງຈາກນັ້ນ ພວກເຈົ້າໄດ້ອາໄສຢູ່ໃນຖິ່ນແຫ້ງແລ້ງກັນດານເປັນ
ເວລາດົນນານ. [8]ແລ້ວເຮົາກໍນຳເອົາພວກເຈົ້າໄປສູ່ແຜ່ນດິນຂອງຊາວອະໂມຣິດ ທີ່ຢູ່ທາງທິດ-
ຕາເວັນອອກຂອງແມ່ນ້ຳຢໍແດນ ພວກເຂົາຕໍ່ສູ້ພວກເຈົ້າ ແຕ່ເຮົາໃຫ້ພວກເຈົ້າຊະນະ ແລະຍຶດ
ເອົາແຜ່ນດິນຂອງພວກເຂົາ ແລ້ວເຮົາກໍທຳລາຍພວກເຂົາຕໍ່ໜ້າພວກເຈົ້າ. [9]ຕໍ່ມາ ບາລາກລູກ
ຊາຍຂອງຊິບໂປ ເຈົ້າຊີວິດຂອງປະເທດໂມອາບ ກໍໄດ້ຕໍ່ສູ້ພວກອິສຣາເອນ ລາວສົ່ງຄົນໄປ
ບອກບາລາອາມລູກຊາຍຂອງເບໂອໃຫ້ມາສາບແຊ່ງພວກເຈົ້າ. [10]ແຕ່ວ່າເຮົາບໍ່ຍອມຟັງຄຳຂອງ

ບາລາອາມ ດັ່ງນັ້ນ ບາລາອາມຈຶ່ງອວຍພອນພວກເຈົ້າ ແລະເຮົາຈຶ່ງໂຜດຊ່ອຍພວກເຈົ້າໃຫ້ພົ້ນ
ຈາກເງື້ອມມືຂອງບາລາກ. [11]ແລ້ວພວກເຈົ້າພາກັນຂ້າມແມ່ນ້ຳຢໍແດນມາສູ່ເມືອງເຢຣິໂກ ຝ່າຍ
ຊາວເມືອງເຢຣິໂກກໍຕໍ່ສູ້ພວກເຈົ້າ ແລະຍັງມີພວກອື່ນທີ່ຕໍ່ສູ້ພວກເຈົ້າອີກ ຄື ຊາວອະໂມຣິດ
ຊາວເປຣີຊີ ຊາວການາອານ ຊາວຮິດຕີ ຊາວກີກາຊີ ຊາວຮີວີ ແລະຊາວເຢບຸດ ແຕ່ວ່າ
ເຮົາໄດ້ໃຫ້ພວກເຈົ້າຊະນະພວກເຂົາ. [12]ເຮົາໄດ້ເຮັດໃຫ້ເຈົ້າຊີວິດອະໂມຣິດສອງຄົນຕົກສະທ້ານ
ຢ້ານກົວ ແລະເຮົາໄດ້ຂັບໄລ່ພວກເຂົາອອກໄປໂດຍທີ່ພວກເຈົ້າບໍ່ໄດ້ຊະນະຍ້ອນດາບ ຫລືໜ້າ
ທະນູເລີຍ. [13]ເຮົາໄດ້ໃຫ້ທີ່ດິນແກ່ພວກເຈົ້າ ໂດຍທີ່ພວກເຈົ້າບໍ່ໄດ້ຂຸດຄົ້ນຖາກຖາງ ແລະເອົາຫົວ
ເມືອງຕ່າງໆ ໃຫ້ ໂດຍທີ່ພວກເຈົ້າບໍ່ໄດ້ກໍ່ສ້າງ ແຕ່ພວກເຈົ້າກໍອາໄສຢູ່ທີ່ນັ້ນ ແລະໄດ້ກິນໝາກ
ອະງຸ່ນ ໝາກກອກ ໂດຍທີ່ພວກເຈົ້າບໍ່ໄດ້ປູກຝັງ.”
[14]ໂຢຊວຍເວົ້າຕໍ່ໄປອີກວ່າ, “ຈົ່ງຂາບໄຫວ້ພຣະຜູ້ເປັນເຈົ້າ ແລະຮັບໃຊ້ພຣະອົງດ້ວຍຄວາມ
ຈິງໃຈ ແລະດ້ວຍຄວາມສັດຊື່ ຈົ່ງປະຖິ້ມພະຕ່າງໆ ທີ່ປູ່ຍ່າຕາຍາຍຂອງພວກທ່ານຂາບໄຫວ້ຢູ່
ທີ່ປະເທດເມໂຊໂປຕາເມຍ ແລະທີ່ປະເທດເອຢິບ. [15]ແລ້ວຈົ່ງຕັດສິນໃຈມື້ນີ້ວ່າ ພວກທ່ານຈະ
ຮັບໃຊ້ຜູ້ໃດ ຈະຮັບໃຊ້ພະຂອງປູ່ຍ່າຕາຍາຍທີ່ປະເທດເມໂຊໂປຕາເມຍ ຫລືວ່າພະຂອງຊາວ
ອະໂມຣິດໃນແຜ່ນດິນທີ່ພວກທ່ານອາໄສຢູ່ນີ້ ແຕ່ວ່າ ຂ້າພະເຈົ້າ ແລະຄອບຄົວຂອງຂ້າພະເຈົ້າ
ຈະຮັບໃຊ້ພຣະຜູ້ເປັນເຈົ້າ.”
[16]ພວກປະຊາຊົນຕອບວ່າ, “ພວກຂ້ານ້ອຍຈະບໍ່ໜີຈາກພຣະຜູ້ເປັນເຈົ້າໄປຮັບໃຊ້ພະອື່ນ.
[17]ພຣະຜູ້ເປັນເຈົ້າຂອງພວກຂ້ານ້ອຍໄດ້ພາພໍ່ແມ່ ແລະພວກຂ້ານ້ອຍອອກຈາກການເປັນຂ້າ
ທາດຂອງປະເທດເອຢິບ ແລະພວກຂ້ານ້ອຍໄດ້ເຫັນການກະທຳອັນຍິ່ງໃຫຍ່ຂອງພຣະອົງ
ພຣະອົງຊົງຄຸ້ມຄອງພວກຂ້ານ້ອຍໃນທຸກໆ ປະເທດທີ່ພວກຂ້ານ້ອຍຜ່ານມາ. [18]ພຣະຜູ້ເປັນເຈົ້າ
ໄດ້ຊົງຂັບໄລ່ຊາວອະໂມຣິດ ທີ່ອາໄສຢູ່ໃນແຜ່ນດິນນັ້ນໜີອອກໄປກ່ອນໜ້າພວກຂ້ານ້ອຍ ດັ່ງ-
ນັ້ນ ພວກຂ້ານ້ອຍຈະຮັບໃຊ້ພຣະຜູ້ເປັນເຈົ້າ ເພາະພຣະອົງຊົງເປັນພຣະເຈົ້າຂອງພວກຂ້າ-
ນ້ອຍ.”
[19]ຝ່າຍໂຢຊວຍກໍເວົ້າຕໍ່ພວກເຂົາວ່າ, “ພວກທ່ານອາດຮັບໃຊ້ພຣະຜູ້ເປັນເຈົ້າບໍ່ໄດ້ ເພາະ
ພຣະອົງບໍລິສຸດ ແລະຊົງເປັນພຣະເຈົ້າທີ່ຫວງແຫນພວກທ່ານ ພຣະອົງຈະບໍ່ຊົງໃຫ້ອະໄພບາບ
ແລະຄວາມຜິດຂອງພວກທ່ານ. [20]ຖ້າພວກທ່ານປະຖິ້ມພຣະຜູ້ເປັນເຈົ້າ ໄປຮັບໃຊ້ພະທັງຫລາຍ
ພຣະອົງຈະຊົງກັບຄືນມາຕໍ່ສູ້ ແລະລົງໂທດພວກທ່ານ ພຣະອົງຈະທຳລາຍພວກທ່ານ ເຖິງແມ່ນ
ວ່າພຣະອົງຊົງເຮັດດີຕໍ່ພວກທ່ານມາແລ້ວກໍຕາມ.”
[21]ພວກປະຊາຊົນຈຶ່ງເວົ້າຕໍ່ໂຢຊວຍວ່າ, “ບໍ່ແມ່ນ! ພວກຂ້ານ້ອຍຈະຮັບໃຊ້ພຣະຜູ້ເປັນເຈົ້າ.”
[22]ໂຢຊວຍກໍຕອບພວກເຂົາວ່າ, “ພວກທ່ານຮັບຮອງໄດ້ບໍວ່າ ພວກທ່ານໄດ້ເລືອກທີ່ຈະຮັບໃຊ້
ພຣະຜູ້ເປັນເຈົ້າ” ພວກເຂົາຕອບວ່າ, “ໂດຍ ພວກຂ້ານ້ອຍຮັບຮ້ອງໄດ້.” [23]ໂຢຊວຍເວົ້າຕໍ່ໄປ
ວ່າ, “ດັ່ງນັ້ນ ຈົ່ງປະຖິ້ມພະຂອງພວກຕ່າງດ້າວທີ່ຢູ່ທ່າມກາງພວກທ່ານສາ ແລະຈົ່ງຕິດຕາມ
ພຣະຜູ້ເປັນເຈົ້າຂອງພວກອິສຣາເອນດ້ວຍຄວາມສັດຊື່.”
[24]ຝ່າຍປະຊາຊົນໄດ້ເວົ້າຕໍ່ໂຢຊວຍວ່າ, “ພວກຂ້ານ້ອຍຈະຮັບໃຊ້ພຣະຜູ້ເປັນເຈົ້າຂອງພວກ

ຂ້ານ້ອຍ ແລະຈະຟັງຄຳສັ່ງຂອງພຣະອົງ.”
25ດັ່ງນັ້ນ ໂຢຊວຍຈຶ່ງໃຫ້ຄຳສັນຍາກັບພວກເຂົາໃນມື້ນັ້ນ ແລະໄດ້ມອບກົດໝາຍກັບຂໍ້ຄຳສັ່ງ
ແກ່ພວກເຂົາຢູ່ທີ່ເມືອງເຊເຄັມ. 26ໂຢຊວຍຈຶ່ງບັນທຶກຂໍ້ຄຳສັ່ງເຫລົ່ານັ້ນໃສ່ປື້ມພຣະທຳຂອງ
ພຣະເຈົ້າ ເພິ່ນເອົາກ້ອນຫີນໃຫຍ່ກ້ອນໜຶ່ງຕັ້ງຂຶ້ນຢູ່ຮົ່ມຕົ້ນກໍ່ ໃນບ່ອນສັກສິດຂອງພຣະຜູ້ເປັນ-
ເຈົ້າ. 27ເພິ່ນເວົ້າຕໍ່ທຸກໆ ຄົນວ່າ, “ຈົ່ງເບິ່ງຫີນກ້ອນນີ້ ມັນຈະເປັນພະຍານໃຫ້ພວກເຮົາ ມັນໄດ້
ຍິນທຸກຖ້ອຍຄຳທີ່ພຣະຜູ້ເປັນເຈົ້າຊົງເວົ້າຕໍ່ພວກເຮົາ ເພາະສະນັ້ນ ມັນຈະເປັນພະຍານບໍ່ໃຫ້
ພວກທ່ານຄິດກະບົດຕໍ່ສູ້ພຣະເຈົ້າຂອງພວກທ່ານ.” 28ແລ້ວໂຢຊວຍກໍໃຫ້ປະຊາຊົນເຫລົ່ານັ້ນ
ກັບໄປສູ່ດິນທີ່ເປັນສ່ວນຂອງໃຜລາວ.

## ໂຢຊວຍ ແລະເອເລອາຊາເສຍຊີວິດ

29ຫລັງຈາກນັ້ນ ໂຢຊວຍລູກຊາຍຂອງນູນ ຊຶ່ງເປັນຜູ້ຮັບໃຊ້ຂອງພຣະຜູ້ເປັນເຈົ້າ ກໍເສຍຊີ-
ວິດໃນເວລາເພິ່ນມີອາຍຸຮ້ອຍສິບປີ. 30ພວກເຂົາຝັງສົບເພິ່ນໄວ້ໃນດິນຂອງເພິ່ນເອງທີ່ບ້ານຕິມ-
ນາດ-ເສຣາ ຢູ່ເທິງພູເອຟຣາຢິມທາງທິດເໜືອຂອງພູກາອາດ. 31ໃນຊົ່ວຊີວິດຂອງໂຢຊວຍນັ້ນ
ພວກອິສຣາເອນໄດ້ຮັບໃຊ້ພຣະຜູ້ເປັນເຈົ້າຕະຫລອດມາ ພວກເຂົາຍັງດຳເນີນການຮັບໃຊ້
ພຣະອົງຢູ່ຕະຫລອດຊີວິດຂອງພວກຜູ້ນຳທຸກໆ ຄົນ ທີ່ຮູ້ຈັກສິ່ງຕ່າງໆທີ່ພຣະຜູ້ເປັນເຈົ້າຊົງເຮັດ
ຕໍ່ພວກອິສຣາເອນ.
32ສ່ວນກະດູກຂອງໂຢເຊັບ ທີ່ພວກອິສຣາເອນເອົາມາຈາກເອຢິບນັ້ນ ກໍຝັງໄວ້ທີ່ເມືອງເຊ-
ເຄັມ ໃນດິນຕອນໜຶ່ງທີ່ຢາໂຄບຊື້ຈາກລູກຊາຍຂອງຮາໂມ ພໍ່ຂອງເຊເຄັມ ເປັນເງິນຮ້ອຍ
ຫລຽນ ດິນນັ້ນເປັນມູນມໍລະດົກຂອງລູກຫລານໂຢເຊັບ.
33ຕໍ່ມາ ເອເລອາຊາ ລູກຂອງອາໂຣນກໍເສຍຊີວິດໄປສົບຂອງເພິ່ນໄດ້ຝັງໄວ້ຢູ່ທີ່ເມືອງ ກິເບ
ອາ ຊຶ່ງເປັນເມືອງຂອງລູກຊາຍຂອງເພິ່ນຊື່ວ່າ ຟີເນຮາດ ເມືອງນີ້ເປັນກຳມະສິດຂອງຟີເນຮາດ
ຢູ່ເທິງພູນ້ອຍເອຟຣາຢິມ.

* * *

# ພວກຜູ້ປົກຄອງ

## ບົດທີ 1

### ຄົນຢູດາກັບຄົນຊີເມໂອນຊະນະກະສັດອາໂດນີ-ເບເຊັກ ແລະຄົນການາອານ1

[1]ຢູ່ມາເມື່ອ ໂຢຊວຍ ສິ້ນຊີວິດແລ້ວ ຄົນ ອິສຣາເອນ ທູນຖາມ ພຣະຜູ້ເປັນເຈົ້າ ວ່າ "ໃຜໃນພວກ
ຂ້ານ້ອຍທັງຫລາຍຈະຂຶ້ນໄປກ່ອນເພື່ອສູ້ຮົບກັບຄົນ ການາອານ" [2]ພຣະຜູ້ເປັນເຈົ້າບອກວ່າ "ຢູ-
ດາ ຈະຂຶ້ນໄປ ເບິ່ງແມ ເຮົາໄດ້ມອບແຜ່ນດິນນັ້ນໄວ້ໃນມືພວກເຂົາແລ້ວ" [3]ຢູດາ ຈຶ່ງເວົ້າກັບຊີ-
ເມໂອນ ພີ່ນ້ອງຂອງຕົນວ່າ "ຈົ່ງຂຶ້ນໄປກັບຂ້ອຍໃນເຂດແດນທີ່ກຳນົດໃຫ້ແກ່ຂ້ອຍ ເພື່ອເຮົາຈະ
ໄດ້ຕໍ່ສູ້ກັບຄົນ ການາອານ ແລະຂ້ອຍຈະໄປຮ່ວມຮົບໃນເຂດແດນທີ່ກຳນົດໃຫ້ແກ່ເຈົ້ານັ້ນດ້ວຍ"
ຊີເມໂອນ ກໍໄປກັບພວກເຂົາ.

[4]ແລ້ວ ຢູດາ ກໍຂຶ້ນໄປ ແລະ ພຣະຜູ້ເປັນເຈົ້າ ໄດ້ມອບຄົນ ການາອານ ແລະຄົນ ເປຣີຊີ ໄວ້ໃນມື
ຂອງພວກເຂົາ ແລະພວກເຂົາກໍປະຫານຄົນທີ່ ເມືອງ ເບເຊັກ ໜຶ່ງໝື່ນຄົນ [5]ແລະພວກເຂົາທັງ-
ຫລາຍພົບ ອາໂດນີ-ເບເຊັກ ໃນ ເມືອງ ເບເຊັກ ແລະສູ້ຮົບກັບເພິ່ນ ພວກເຂົາໄດ້ປະຫານຄົນ ກາ-
ນາອານ ແລະຄົນ ເປຣີຊີ [6]ອາໂດນີ-ເບເຊັກ ໜີໄປ ແຕ່ພວກເຂົານຳຈັບໄດ້ ແລ້ວຕັດນິ້ວຫົວໂປ້ມື
ແລະນິ້ວຫົວໂປ້ຕີນຂອງເພິ່ນອອກ [7]ອາໂດນີ-ເບເຊັກ ກ່າວວ່າ "ມີກະສັດເຈັດສິບອົງທີ່ມີຫົວໂປ້ມື
ແລະຫົວໂປ້ຕີນກຸດ ເກັບເສດອາຫານຢູ່ກ້ອງໂຕະຂອງເຮົາ ເຮົາໄດ້ເຮັດແກ່ພວກເຂົາຢ່າງໃດ
ພຣະເຈົ້າ ຈຶ່ງເຮັດແກ່ເຮົາແນວນັ້ນ" ພວກເຂົາກໍຈັບຕົວເພິ່ນມາທີ່ກຸງ ເຢຣູຊາເລັມ ແລະໄດ້ສິ້ນຊີ-
ວິດໃນບ່ອນນັ້ນ [8]ແລະຄົນ ຢູດາ ໄດ້ເຂົ້າໂຈມຕີເມືອງ ເຢຣູຊາເລັມ ແລະຍຶດເມືອງໄດ້ ຈຶ່ງຂ້າຟັນ
ຊາວເມືອງດ້ວຍຄົມດາບ ແລະເອົາໄຟເຜົາເມືອງ.

[9]ພາຍຫລັງ ຄົນ ຢູດາ ໄດ້ລົງໄປສູ້ຮົບກັບຄົນ ການາອານ ຜູ້ຊຶ່ງຕັ້ງຢູ່ໃນເຂດແດນພູເຂົາ ໃນ
ພາກໃຕ້ ແລະໃນຮ່ອມພູເຂົາ [10]ແລະ ຢູດາ ໄດ້ໄປສູ້ຮົບກັບຄົນ ການາອານ ຜູ້ຢູ່ໃນ ເຮັບໂຣນ
(ເມືອງ ເຮັບໂຣນ ນັ້ນແຕ່ກ່ອນມີຊື່ວ່າ ກີຣິອາດ-ອາຣະບາ) ແລະພວກເຂົາທັງຫລາຍໄດ້ປະຫານ
ເຊຊາຍ ອາຮີມານ ແລະ ຕານມາຍ [11]ພວກເຂົາຍົກທັບຈາກບ່ອນນັ້ນໄປສູ້ຮົບກັບຊາວເມືອງ
ເດບີ ເມືອງ ເດບີ ນັ້ນແຕ່ກ່ອນມີຊື່ວ່າ ກີຣິອາດ-ເສເຟ [12]ແລະ ກາເລັບ ກ່າວວ່າ "ໃຜໂຈມຕີເມືອງ
ກີຣິອາດ-ເສເຟ ແລະຍຶດໄດ້ ເຮົາຈະຍົກ ອັກສາ ລູກສາວຂອງເຮົາໃຫ້ເປັນພັນລະຍາ" [13]ແລະ
ໂອດນີເອນ ລູກຊາຍ ເກນັດ ນ້ອງຊາຍຂອງ ກາເລັບ ຕີເອົາເມືອງນັ້ນໄດ້ ເພິ່ນຈຶ່ງຍົກ ອັກສາ ລູກ
ສາວ ຂອງຕົນ ໃຫ້ເປັນພັນລະຍາ.

[14]ຢູ່ມາເມື່ອແຕ່ງງານກັນແລ້ວ ນາງຈຶ່ງຊວນຜົວໃຫ້ຂໍທີ່ນາຕໍ່ພໍ່ ນາງກໍລົງຈາກຫລັງລາ ແລະ
ກາເລັບ ຖາມນາງວ່າ "ເຈົ້າຕ້ອງການອັນໃດ" [15]ນາງຈຶ່ງຕອບເພິ່ນວ່າ "ຂໍຂອງຂວັນໃຫ້ລູກຈັກ-
ຢ່າງໜຶ່ງແດ່ ເມື່ອພໍ່ໃຫ້ລູກມາຢູ່ໃນແຜ່ນດິນພາກໃຕ້ແລ້ວ ລູກຂໍນ້ຳພຸດ້ວຍ" ແລະ ກາເລັບ ກໍຍົກ
ບໍ່ນ້ຳພຸເທິງ ແລະບໍ່ນ້ຳພຸລຸ່ມໃຫ້ແກ່ນາງ.

[16]ຄົນ ເກນີ ພໍ່ເຖົ້າຂອງ ໂມເຊ ໄດ້ຂຶ້ນໄປຈາກເມືອງທີ່ມີຕົ້ນຕານ ພ້ອມກັບຄົນ ຢູດາ ມາເຖິງຖິ່ນ
ແຫ້ງແລ້ງກັນດານ ຢູດາ ຊຶ່ງຢູ່ໃນພາກໃຕ້ໃກ້ ອາຣັດ ແລະພວກເຂົາກໍເຂົ້າໄປຕັ້ງຖິ່ນຖານຢູ່ກັບ
ຊົນຊາດນັ້ນ.

[17]ແລະ ຢູດາ ກໍຍົກທັບ ໄປຮ່ວມກັບ ຊີເມໂອນ ພີ່ນ້ອງ ຂອງ ພວກ ເຂົາປະຫານ ຄົນ ການາອານ
ຊຶ່ງຢູ່ໃນເມືອງ ເຊຟັດ ແລະທຳລາຍເມືອງນັ້ນຢ່າງເດັດຂາດ ເມືອງນັ້ນຈຶ່ງເອີ້ນວ່າ ໂຮມາ [18]ຢູດາ
ໄດ້ຍຶດເມືອງ ຄາຊາ ພ້ອມທັງອານາເຂດ ແລະເມືອງ ອາຊະກາໂລນ ພ້ອມທັງອານາເຂດ ແລະ
ເມືອງ ເອັກໂຣນ ພ້ອມທັງອານາເຂດໄວ້ດ້ວຍ.

[19]ແລະ ພຣະຜູ້ເປັນເຈົ້າ ສະຖິດກັບ ຢູດາ ພວກເຂົາຈຶ່ງຂັບໄລ່ຊາວເຂດແດນພູເຂົາອອກໄປ
ແຕ່ຈະຂັບໄລ່ຊາວ ເມືອງທີ່ຢູ່ໃນຮ່ອມພູເຂົານັ້ນບໍ່ໄດ້ ເພາະວ່າພວກ ເຫລົ່ານັ້ນມີລົດຮົບ ເຫລັກ
[20]ເມືອງ ເຮັບໂຣນ ນັ້ນ ພວກເຂົາຍົກໃຫ້ ກາເລັບ ດັ່ງທີ່ ໂມເຊ ໄດ້ກ່າວໄວ້ ກາເລັບ ຈຶ່ງຂັບໄລ່ລູກ
ຊາຍທັງສາມຄົນຂອງ ອານາກ ອອກໄປ.

## ຄົນເບັນຢາມິນບໍ່ໄດ້ຂັບໄລ່ຄົນເຢບຸດອອກຈາກກຸງເຢຣູຊາເລັມ

[21]ແຕ່ຄົນ ເບັນຢາມິນ ບໍ່ໄດ້ຂັບໄລ່ຄົນ ເຢບຸດ ຜູ້ຢູ່ໃນ ເຢຣູຊາເລັມ ໃຫ້ອອກໄປ ດັ່ງນັ້ນຄົນ ເຢ-
ບຸດ ຈຶ່ງອາໄສຢູ່ກັບຄົນ ເບັນຢາມິນ ໃນ ເຢຣູຊາເລັມ ຈົນເຖິງທຸກມື້ນີ້.

[22]ນອກຈາກນີ້ ວົງວານຂອງ ໂຢເຊັບ ໄດ້ຂຶ້ນໄປສູ້ຮົບເມືອງ ເບັດເອນ ດ້ວຍ ແລະ ພຣະຜູ້ເປັນ-
ເຈົ້າ ສະຖິດກັບພວກເຂົາ [23]ວົງວານຂອງ ໂຢເຊັບ ໄດ້ໃຊ້ຄົນໄປສອດແນມເມືອງ ເບັດເອນ (ແຕ່
ກ່ອນເມືອງນີ້ຊື່ ລູເຊ) [24]ແລະຜູ້ສອດແນມເຫັນຊາຍຄົນໜຶ່ງຍ່າງອອກມາຈາກເມືອງ ຈຶ່ງເວົ້າກັບ
ລາວວ່າ "ຂໍຊີ້ທາງເຂົ້າເມືອງນີ້ໃຫ້ແກ່ພວກເຮົາ ແລະເຮົາຈະປານີເຈົ້າ" [25]ຊາຍຄົນນັ້ນກໍຊີ້ທາງ
ເຂົ້າເມືອງໃຫ້ ແລະພວກເຂົາປະຫານເມືອງນັ້ນ ທຳລາຍດ້ວຍຄົມດາບ ແຕ່ພວກເຂົາປ່ອຍໃຫ້
ຊາຍຄົນນັ້ນ ແລະຄອບຄົວທັງໝົດຂອງລາວລອດໄປ [26]ຊາຍຄົນນັ້ນກໍເຂົ້າໄປໃນແຜ່ນດິນຂອງ
ຄົນ ຮິດຕີ ແລະສ້າງເມືອງຂຶ້ນເມືອງໜຶ່ງ ເອີ້ນຊື່ວ່າເມືອງ ລູເຊ ຊຶ່ງເປັນຊື່ຢູ່ຈົນທຸກມື້ນີ້.

## ຄົນມານາເຊກັບຕະກູນອື່ນໆ ມີໄຊຊະນະໃນບາງແຫ່ງ

[27]ມານາເຊ ບໍ່ໄດ້ຂັບໄລ່ຊາວເມືອງ ເບັດ-ເຊອານ ແລະຊາວຊົນນະບົດຂອງ ເມືອງນັ້ນໃຫ້ອອກ
ໄປ ຫລືຊາວເມືອງຕາອານັກກັບຊາວຊົນນະບົດຂອງເມືອງນັ້ນ ຫລືຊາວເມືອງ ໂດເຣ ກັບຊາວ
ຊົນນະບົດຂອງເມືອງນັ້ນ ຫລືຊາວເມືອງ ອິບເລອາມ ກັບຊາວຊົນນະບົດຂອງເມືອງນັ້ນຫລືຊາວ
ເມືອງ ເມກິດໂດ ກັບຊາວຊົນນະບົດຂອງເມືອງນັ້ນ ແຕ່ຄົນ ການາອານ ຍັງຝືນອາໄສຢູ່ໃນແຜ່ນ-
ດິນນັ້ນ [28]ຢູ່ມາເມື່ອຄົນ ອິສຣາເອນ ມີກຳລັງເຂັ້ມແຂງຂຶ້ນກໍບັງຄັບຄົນ ການາອານ ໃຫ້ເສຍສ່ວຍ
ແຕ່ບໍ່ໄດ້ຂັບໄລ່ໃຫ້ພວກເຂົາອອກໄປໝົດ.

[29]ແລະ ເອຟຣາອິມ ບໍ່ໄດ້ຂັບໄລ່ຄົນ ການາອານ ຜູ້ອາໄສຢູ່ໃນເມືອງ ເກເຊ ໃຫ້ອອກໄປ ແຕ່ຄົນ
ການາອານ ຍັງອາໄສຢູ່ໃນເມືອງ ເກເຊ ທ່າມກາງພວກເຂົາ.

[30]ເຊບູລູນ ບໍ່ໄດ້ຂັບໄລ່ຊາວເມືອງ ກິດໂຣນ ຫລືຊາວເມືອງ ນາຮາລານ ແຕ່ຄົນ ການາອານ ໄດ້
ອາໄສຢູ່ທ່າມກາງພວກເຂົາ ແລະ ໄດ້ເສຍຊ່ວຍ.

[31]ອາເຊ ບໍ່ໄດ້ຂັບໄລ່ຊາວເມືອງ ອັກໂກ ຫລືຊາວເມືອງ ຊີໂດນ ຫລືຊາວເມືອງ ອາຮະລາບ

ຫລືຊາວເມືອງອັກຊີບ ຫລືຊາວເມືອງເຮັນບາ ຫລືຊາວເມືອງອາເຟັກ ຫລືຊາວເມືອງເຣໂຮບ
[32]ແຕ່ຄົນອາເຊໄດ້ອາໄສຢູ່ທ່າມກາງຄົນການາອານຊາວແຜ່ນດິນນັ້ນ ເພາະວ່າພວກເຂົາບໍ່ໄດ້
ຂັບໄລ່ໃຫ້ອອກໄປ.
[33]ຄົນນັບທາລີບໍ່ໄດ້ຂັບໄລ່ຊາວເມືອງເບັດ-ເຊເມັດ ຫລືຊາວເມືອງເບັດ-ອານາດ ແຕ່ອາໄສ
ຢູ່ໃນທ່າມກາງຄົນການາອານຊາວແຜ່ນດິນນັ້ນ ແຕ່ຢ່າງໃດກໍດີ ຊາວເມືອງເບັດ-ເຊເມັດ ແລະ
ຊາວເມືອງເບັດ-ອານາດໄດ້ເສຍຊ່ວຍໃຫ້ພວກເຂົາ.
[34]ຄົນອະໂມຣິດໄດ້ຂັບໄລ່ຄົນດານໃຫ້ກັບເຂົ້າໄປໃນເຂດພູເຂົາ ບໍ່ຍອມໃຫ້ລົງມາຍັງຮ່ອມພູ-
ເຂົາ [35]ຄົນອະໂມຣິດຍັງຝືນອາໄສຢູ່ທີ່ພູເຂົາເຮເລດໃນເມືອງອາຢາໂລນ ແລະໃນເມືອງຊາ-
ອານບິມ ແຕ່ມືຂອງວົງວານຂອງໂຢເຊັບເໜືອກວ່າມືພວກເຂົາທັງຫລາຍ ພວກເຂົາຈຶ່ງໄດ້ເສຍ
ຊ່ວຍ [36]ອານາເຂດຂອງຄົນອະໂມຣິດຕັ້ງຕົ້ນແຕ່ທາງຂ້າມພູເຂົາອັກຣັບບິມຕັ້ງແຕ່ເມືອງເຊລາ
ຂຶ້ນໄປເລື້ອຍໆ.

## ບົດທີ 2

### ທູດຂອງພຣະຜູ້ເປັນເຈົ້າທີ່ໂບກິມ

[1]ຕໍ່ມາ ທູດຂອງພຣະຜູ້ເປັນເຈົ້າໄດ້ສະເດັດມາຈາກເມືອງກິນການເພື່ອໄປໂບກິມ ທູດອົງນີ້
ເວົ້າຕໍ່ພວກອິສຣາເອນວ່າ, "ເຮົາພາພວກເຈົ້າອອກມາຈາກປະເທດເອຢິບ ແລະນຳເຂົ້າໄປໃນ
ແຜ່ນດິນທີ່ໄດ້ສັນຍາໄວ້ກັບປູ່ຍ່າຕາຍາຍຂອງພວກເຈົ້າ ເຮົາໄດ້ບອກພວກເຈົ້າວ່າ ເຮົາຈະບໍ່ລຶ-
ບລ້າງຄຳໝັ້ນສັນຍາທີ່ມີໄວ້ກັບພວກເຈົ້າຈັກເທື່ອ. [2]ແລະພວກເຈົ້າບໍ່ຕ້ອງສັນຍາໃດໆ ກັບປະ-
ຊາຊົນທີ່ຢູ່ໃນແຜ່ນດິນນີ້ ພວກເຈົ້າຕ້ອງທຳລາຍແທ່ນບູຊາຂອງພວກເຂົາຖິ້ມໃຫ້ໝົດ ແຕ່ພວກ
ເຈົ້າບໍ່ໄດ້ເຮັດຕາມທີ່ເຮົາໄດ້ບອກໄວ້ ພວກເຈົ້າກັບໄປເຮັດຢ່າງອື່ນແທນ. [3]ສະນັ້ນ ເຮົາຂໍບອກ
ພວກເຈົ້າດຽວນີ້ວ່າ ເຮົາຈະບໍ່ຂັບໄລ່ປະຊາຊົນເຫລົ່ານີ້ອອກໄປຈາກບ່ອນທີ່ພວກເຈົ້າຈະໄປຢູ່ນັ້ນ
ພວກເຂົາຈະເປັນຜູ້ຂົ່ມເຫັງພວກເຈົ້າ ແລະພະຂອງພວກເຂົາຈະເປັນສິ່ງທີ່ລໍ້ລວງໃຫ້ພວກເຈົ້າໄດ້
ຮັບເຄາະຮ້າຍ."
[4]ເມື່ອທູດຂອງພຣະຜູ້ເປັນເຈົ້າເວົ້າດັ່ງນັ້ນແລ້ວ ພວກອິສຣາເອນທຸກຄົນກໍພາກັນຮ້ອງໄຫ້.
[5](ດັ່ງນັ້ນ ບ່ອນນີ້ຈຶ່ງໄດ້ເອີ້ນວ່າ ໂບກິມ ແລ້ວພວກເຂົາກໍເອົາເຄື່ອງບູຊາຖວາຍແດ່ພຣະຜູ້ເປັນ-
ເຈົ້າຢູ່ທີ່ນັ້ນ).

### ໂຢຊວຍເສຍຊີວິດ

[6]ເມື່ອໂຢຊວຍໄດ້ສັ່ງພວກອິສຣາເອນກັບຄືນເມືອ ພວກເຂົາແຕ່ລະຄົນກໍໄປຮັບເອົາສ່ວນ
ແບ່ງຂອງໃຜລາວໃນແຜ່ນດິນນັ້ນ. [7]ພວກອິສຣາເອນຮັບໃຊ້ພຣະຜູ້ເປັນເຈົ້າຕະຫລອດຊົ່ວອາຍຸ
ຂອງໂຢຊວຍ ແລະຫລັງຈາກເພິ່ນເສຍຊີວິດໄປແລ້ວ ພວກເຂົາຍັງຮັບໃຊ້ພຣະອົງຕໍ່ໄປຈົນຕະ-
ຫລອດຊົ່ວອາຍຸຂອງພວກຜູ້ນຳ ພວກຜູ້ນຳເຫລົ່ານີ້ເປັນຜູ້ຮູ້ຈັກກິດຈະການທຸກຢ່າງທີ່ພຣະຜູ້-
ເປັນເຈົ້າຊົງເຮັດຕໍ່ພວກອິສຣາເອນ. [8]ໂຢຊວຍລູກຂອງນູນຜູ້ຮັບໃຊ້ຂອງພຣະຜູ້ເປັນເຈົ້າ ໄດ້
ເສຍຊີວິດໄປ ເມື່ອອາຍຸໄດ້ຮ້ອຍສິບປີ. [9]ສົບຂອງເພິ່ນໄດ້ຝັງໄວ້ໃນດິນຂອງເພິ່ນເອງ ຢູ່ເທິງພູ

ເອຟຣາຢິມ ທີ່ເມືອງ ຕິມນັດ-ເຂເຣັດ ຢູ່ທາງທິດເໜືອຂອງພູ ກາອາດ. [10]ຕໍ່ມາ ຄົນທຸກໆ ຄົນໃນ
ສະໄໝດຽວກັນນີ້ກໍເສຍຊີວິດໄປເຊັ່ນດຽວກັນ ພວກທີ່ເກີດໃໝ່ໃຫຍ່ລຸນໄດ້ລືມ ພຣະຜູ້ເປັນເຈົ້າ
ໄປໝົດ ຕະຫລອດທຸກສິ່ງທີ່ພຣະອົງໄດ້ຊົງເຮັດຕໍ່ພວກ ອິສຣາເອນ.

## ພວກອິສຣາເອນປະຖິ້ມການນະມັດສະການພຣະຜູ້ເປັນເຈົ້າ

[11]ເມື່ອພວກ ອິສຣາເອນ ເຮັດຜິດຕໍ່ສູ້ ພຣະຜູ້ເປັນເຈົ້າ ແລະຮັບໃຊ້ ພະບາອານ. [12]ພວກເຂົາໄດ້
ປະຖິ້ມການນະມັດສະການ ພຣະຜູ້ເປັນເຈົ້າ ແຫ່ງປູ່ຍ່າຕາຍາຍຂອງພວກເຂົາ ຜູ້ຊົງນຳໜ້າພວກ
ເຂົາອອກຈາກປະເທດ ເອຢິບ ພວກເຂົາພາກັນເລີ່ມນະມັດສະການພະອື່ນ ຊຶ່ງເປັນພະຂອງຊົນ
ຊາດຕ່າງໆ ທີ່ຢູ່ອ້ອມຮອບພວກເຂົານັ້ນ ພວກເຂົາໄດ້ພາກັນຂາບໄຫວ້ພະເຫລົ່ານີ້ ແລະເຮັດໃຫ້
ພຣະຜູ້ເປັນເຈົ້າ ຊົງ ພຣະພິໂລດ. [13]ພວກ ເຂົາ ໄດ້ ປະ ຖິ້ມ ການ ນະມັດສະການ ພຣະຜູ້ເປັນເຈົ້າ
ແລະຮັບໃຊ້ ພະບາອານ ແລະພະ ອັດຊະຕະໂຣດ ທັງຫລາຍ.

[14]ສ່ວນ ພຣະຜູ້ເປັນເຈົ້າ ກໍຊົງ ພຣະພິໂລດຕໍ່ພວກ ອິສຣາເອນ ພຣະອົງ ຈຶ່ງ ຊົງ ເຮັດ ໃຫ້ພວກ
ໂຈນເຂົ້າມາໂຈມຕີ ແລະປຸ້ນພວກເຂົາ ແລະພຣະອົງຍັງຊົງປ່ອຍໃຫ້ພວກສັດຕູທີ່ຢູ່ອ້ອມຮອບນັ້ນ
ຊະນະພວກເຂົາ ພວກ ອິສຣາເອນ ກໍບໍ່ສາມາດປ້ອງກັນຕົວເອງໄດ້. [15]ທຸກໆ ເທື່ອທີ່ພວກເຂົາ
ອອກໄປສູ້ຮົບ ພຣະຜູ້ເປັນເຈົ້າ ກໍຊົງຕໍ່ສູ້ພວກເຂົາຕາມທີ່ພຣະອົງຊົງບອກໄວ້ແລ້ວ ພວກເຂົາໄດ້
ຕົກຢູ່ໃນພາວະຂັດສົນຢ່າງໃຫຍ່ຫລວງ.

[16]ເວລາຕໍ່ມາ ພຣະຜູ້ເປັນເຈົ້າ ໄດ້ຊົງ ໂຜດໃຫ້ພວກ ອິສຣາເອນ ມີຜູ້ປົກຄອງທີ່ເຂັ້ມແຂງ ເພື່ອ
ຊ່ອຍໃຫ້ພົ້ນຈາກເງື້ອມມືຂອງພວກໂຈນ. [17]ແຕ່ພວກເຂົາບໍ່ຍອມປະຕິບັດຕາມຄຳສັ່ງຂອງພວກຜູ້
ປົກຄອງ ເຫລົ່ານັ້ນ ແລ້ວບໍ່ສັດຊື່ຕໍ່ ພຣະຜູ້ເປັນເຈົ້າ ໂດຍໄປນະມັດສະການພະອື່ນ ພໍ່ແມ່ຂອງ
ພວກ ເຂົາ ໄດ້ຟັງຄຳສັ່ງ ຂອງ ພຣະຜູ້ເປັນເຈົ້າ ແຕ່ພວກ ເຂົາຍັງບໍ່ປະຕິບັດຕາມ. [18]ທຸກເທື່ອທີ່
ພຣະຜູ້ເປັນເຈົ້າ ຊົງ ໂຜດໃຫ້ພວກເຂົາມີຜູ້ປົກຄອງ ພຣະອົງກໍຊົງຊ່ອຍເຫລືອຜູ້ນັ້ນ ແລະຊົງຊ່ອຍ
ໃຫ້ພົ້ນຈາກເງື້ອມມືຂອງສັດຕູຕະຫລອດຊົ່ວຊີວິດຂອງຜູ້ປົກຄອງຄົນນັ້ນ ພຣະຜູ້ເປັນເຈົ້າ ຊົງມີ
ຄວາມ ເມດຕາຕໍ່ພວກ ເຂົາ ເພາະວ່າພວກ ເຂົາ ໄດ້ຮ້ອງຄວນຄາງຢ່າງທໍລະມານຍ້ອນຖືກກົດຂີ່
ຂົ່ມເຫັງ. [19]ແຕ່ ເມື່ອຜູ້ປົກຄອງ ເສຍຊີວິດ ໄປ ແລ້ວ ພວກປະຊາຊົນກໍກັບຄືນມາເຮັດຢ່າງ ເກົ່າ
ແລະ ເຮັດການ ຊົ່ວຮ້າຍ ຫລາຍກວ່າພໍ່ ແມ່ຂອງ ພວກ ເຂົາ ພວກ ເຂົາຕິດຕາມພະອື່ນທັງຮັບໃຊ້
ແລະບົວລະບັດພະນັ້ນ.

[20]ພວກ ເຂົາດື້ດ້ານຖືຮີດຄອງອັນຊົ່ວຮ້າຍ ດ້ວຍ ເຫດນີ້ ພຣະຜູ້ເປັນເຈົ້າ ຈຶ່ງຊົງພຣະພິໂລດ
ພວກ ອິສຣາເອນ ຫລາຍຂຶ້ນ ແລະຊົງກ່າວວ່າ “ເພາະຊົນຊາດເຫລົ່ານີ້ ໄດ້ທຳລາຍຄຳສັນຍາທີ່
ເຮົາມີໄວ້ກັບປູ່ຍ່າຕາຍາຍຂອງພວກເຂົາ ແລະພວກເຂົາບໍ່ໄດ້ຟັງຄຳຂອງເຮົາ. [21]ແຕ່ນີ້ຕໍ່ໄປ ເຮົາ
ຈະບໍ່ຂັບໄລ່ຊົນຊາດໃດທີ່ຍັງ ເຫລືອຢູ່ໃນປະເທດນີ້ ຊຶ່ງນັບຕັ້ງແຕ່ການ ເສຍຊີວິດຂອງ ໂຢຊວຍ
ມາ. [22]ເພື່ອເຮົາຈະໄດ້ຮູ້ວ່າ ພວກ ອິສຣາເອນ ຈະຕິດຕາມເສັ້ນທາງຂອງເຮົາ ຕາມທີ່ປູ່ຍ່າຕາ
ຍາຍຂອງພວກເຂົາໄດ້ປະຕິບັດຕາມມານັ້ນຫລືບໍ່.” [23]ດັ່ງນັ້ນ ພຣະຜູ້ເປັນເຈົ້າ ຈຶ່ງຊົງປ່ອຍຊົນ
ຊາດທີ່ບໍ່ໄດ້ຢູ່ໃຕ້ອຳນາດຂອງ ໂຢຊວຍ ໄວ້ ໂດຍບໍ່ໄດ້ຂັບໄລ່ພວກເຂົາອອກທັນທີ.

# ບົດທີ 3

[1]ຕໍ່ໄປນີ້ເປັນປະຊາຊາດທີ່ ພຣະຜູ້ເປັນເຈົ້າ ໃຫ້ເຫລືອໄວ້ ເພື່ອໃຊ້ທົດລອງບັນດາຄົນ ອິສຣາ-
ເອນ ຄືຄົນ ອິສຣາເອນ ຄົນໃດຊຶ່ງຍັງບໍ່ເຄີຍປະສົບສົງຄາມທັງຫລາຍໃນ ການາອານ [2]ແຕ່ໃຫ້
ເຊື້ອສາຍຄົນ ອິສຣາເອນ ເຂົ້າໃຈເລື່ອງສົງຄາມ ເພື່ອຢ່າງໜ້ອຍ ພຣະອົງຈະໄດ້ສອນຜູ້ທີ່ຍັງບໍ່ຮູ້
ມາກ່ອນ [3]ຄືເຈົ້ານາຍທັງຫ້າຂອງພວກ ຟີລິດສະຕິນ ຄົນ ການາອານ ທັງໝົດ ຊາວຊີໂດນ ແລະ
ຄົນ ຮີວີ ຜູ້ອາໄສຢູ່ເທິງພູເຂົາ ເລບານອນ ຕັ້ງແຕ່ພູເຂົາ ບາອານ-ເຮີໂມນ ຈົນຮອດທາງເຂົ້າເມືອງ
ຮາມັດ [4]ເຫລືອຄົນເຫລົ່ານີ້ຢູ່ເພື່ອທົດລອງຄົນ ອິສຣາເອນ ໃຫ້ຮູ້ວ່າ ອິສຣາເອນ ຈະຟັງພຣະບັນຍັດ
ຂອງ ພຣະຜູ້ເປັນເຈົ້າ ຊຶ່ງພຣະອົງສັ່ງໄວ້ກັບບັນພະບູລຸດຂອງພວກເຂົາໂດຍ ໂມເຊ ນັ້ນຫລືບໍ່.

[5]ດັ່ງນັ້ນແຫລະ ຄົນ ອິສຣາເອນ ຈຶ່ງອາໄສຢູ່ໃນທ່າມກາງຄົນ ການາອານ ຄົນ ຮິດຕີ ຄົນ ອະ-
ໂມຣິດ ຄົນ ເປຣີຊີ ຄົນ ຮີວີ ແລະຄົນ ເຢບຸດ [6]ພວກເຂົາໄປສູ່ຂໍລູກສາວຂອງຄົນ ເຫລົ່ານັ້ນມາ
ເປັນ ເມຍ ແລະຍົກລູກສາວ ຂອງຕົນ ໃຫ້ ແກ່ລູກຊາຍ ຂອງຄົນ ເຫລົ່ານັ້ນ ແລະ ໄດ້ບົວລະບັດພະ
ຂອງພວກເຂົາເຫລົ່ານັ້ນ.

[7]ຄົນ ອິສຣາເອນ ໄດ້ ເຮັດຊົ່ວໃນສາຍພຣະເນດຂອງ ພຣະຜູ້ເປັນເຈົ້າ ພວກເຂົາລືມ ພຣະຜູ້-
ເປັນເຈົ້າ ພຣະເຈົ້າ ຂອງຕົນ ໄປບົວລະບັດ ພະບາອານ ທັງຫລາຍ ແລະເສົາຮູບເຄົາລົບ [8]ເພາະ-
ສະນັ້ນ ພຣະພິໂລດຂອງ ພຣະຜູ້ເປັນເຈົ້າ ກໍພຸ່ງຂຶ້ນຕໍ່ ອິສຣາເອນ ແລະພຣະອົງຂາຍພວກເຂົາ
ໄວ້ໃນມື ກູຊານ-ຣິຊາທາຢິມ ກະສັດເມືອງ ເມໂຊໂປຕາເມຍ ແລະຄົນ ອິສຣາເອນ ໄດ້ຮັບໃຊ້ ກູ-
ຊານ-ຣິຊາທາຢິມ ແປດປີ.

## ຜູ້ປົກຄອງໂອດນີເອນໄດ້ຊ່ວຍຄົນອິສຣາເອນໃຫ້ລອດພົ້ນ

[9]ແຕ່ ເມື່ອຄົນ ອິສຣາເອນ ຮ້ອງທູນ ພຣະຜູ້ເປັນເຈົ້າ ພຣະຜູ້ເປັນເຈົ້າ ກໍໃຫ້ເກີດຜູ້ຊ່ວຍ ແກ່ຄົນ
ອິສຣາເອນ ຜູ້ ໄດ້ຊ່ວຍພວກ ເຂົາທັງຫລາຍ ໃຫ້ລອດພົ້ນ ຄື ໂອດນີເອນ ລູກຊາຍຂອງ ເກນັດ
ນ້ອງຊາຍຂອງ ກາເລັບ [10]ພຣະວິນຍານ ຂອງ ພຣະຜູ້ເປັນເຈົ້າ ສະຖິດຢູ່ກັບ ໂອດນີເອນ ແລະ
ເພິ່ນຈຶ່ງປົກຄອງຄົນ ອິສຣາເອນ ແລະອອກໄປເຮັດສົງຄາມ ແລະ ພຣະຜູ້ເປັນເຈົ້າ ໄດ້ມອບ ກູ-
ຊານ-ຣິຊາທາຢິມ ກະສັດເມືອງ ເມໂຊໂປຕາເມຍ ໄວ້ໃນມືຂອງເພິ່ນ ແລະມືຂອງເພິ່ນຊະນະ ກູ-
ຊານ-ຣິຊາທາຢິມ [11]ດັ່ງນັ້ນ ແຜ່ນດິນຈຶ່ງໄດ້ສະຫງົບຢູ່ສີ່ສິບປີ ແລ້ວ ໂອດນີເອນ ລູກຊາຍ ເກນັດ
ກໍສິ້ນຊີວິດ.

## ເອຮຸດໄດ້ຊ່ວຍຄົນອິສຣາເອນໃຫ້ລອດພົ້ນຈາກຄົນໂມອາບ

[12]ແລະຄົນ ອິສຣາເອນ ໄດ້ ເຮັດຊົ່ວໃນສາຍພຣະເນດຂອງ ພຣະຜູ້ເປັນເຈົ້າ ອີກ ພຣະຜູ້ເປັນ-
ເຈົ້າ ຈຶ່ງໄດ້ເສີມກຳລັງ ເອັກໂລນ ກະສັດເມືອງ ໂມອາບ ເພື່ອຕໍ່ສູ້ ອິສຣາເອນ ເພາະວ່າພວກເຂົາ
ທັງຫລາຍ ໄດ້ປະພຶດຊົ່ວ ໃນ ສາຍພຣະເນດຂອງ ພຣະຜູ້ເປັນເຈົ້າ [13]ເພິ່ນ ຈຶ່ງ ໄດ້ ໃຫ້ຄົນ ອຳໂມນ
ແລະຄົນ ອາມາເລັກ ມາສົມທົບ ຍົກທັບໄປໂຈມຕີ ອິສຣາເອນ ແລະ ໄດ້ຍຶດເມືອງ ເຢຣີໂກ ໄວ້ ຊຶ່ງ
ເປັນ ເມືອງທີ່ມີຕົ້ນຕານ [14]ແລະຄົນ ອິສຣາເອນ ຈຶ່ງຮັບໃຊ້ ເອັກໂລນ ກະສັດ ເມືອງ ໂມອາບ ຢູ່ເຖິງ
ສິບແປດປີ.

[15]ແຕ່ ເມື່ອຄົນ ອິສຣາເອນ ຮ້ອງທູນ ພຣະຜູ້ເປັນເຈົ້າ ພຣະຜູ້ເປັນເຈົ້າ ໃຫ້ເກີດຜູ້ຊ່ວຍຄົນໜຶ່ງ

ແກ່ພວກເຂົາທັງຫລາຍ ຊື່ເອຮຸດ ລູກຊາຍເກຣະ ຄົນເບັນຢາມິນ ຄົນແຮງມືຊ້າຍຄົນອິສຣາ-
ເອນໃຫ້ເພິ່ນເປັນຜູ້ນຳເອົາສ່ວຍໄປມອບແກ່ເອັກໂລນກະສັດເມືອງໂມອາບ [16]ເອຮຸດໄດ້ເຮັດ
ດາບສອງຄົມໄວ້ປະຈຳຕົວເຫລັ້ມໜຶ່ງຍາວສອກໜຶ່ງ ເໜັບໄວ້ພາຍໃນຜ້າຢູ່ຂາເບື້ອງຂວາ [17]ລາວ
ກໍນຳຂອງຂວັນໄປມອບແກ່ເອັກໂລນກະສັດເມືອງໂມອາບ ຝ່າຍເອັກໂລນເປັນຄົນຕຸ້ຍຫລາຍ.
[18]ແລະເມື່ອເອຮຸດມອບຂອງຂວັນສຳເລັດແລ້ວ ເພິ່ນຈຶ່ງໄປສົ່ງຄົນທີ່ຫາບຫາມຂອງຂວັນນັ້ນ
[19]ແລ້ວຕົວເພິ່ນກັບໄປຈາກຮູບເຄົາລົບສະຫລັກທີ່ຢູ່ໃກ້ກິນການ ທູນວ່າ “ຂ້າແດ່ກະສັດ ຂ້າພະ-
ອົງມີຂໍ້ລາຊະການລັບທີ່ຈະກາບທູນໃຫ້ຮູ້” ກະສັດຈຶ່ງມີບັນຊາວ່າ “ງຽບໆ” ບັນດາຜູ້ທີ່ເຝົ້າຢູ່ກໍ
ທູນລາອອກໄປໝົດ [20]ແລະເອຮຸດກໍເຂົ້າໄປເຝົ້າເພິ່ນ ຂະນະນັ້ນ ເພິ່ນປະທັບຢູ່ແຕ່ອົງດຽວໃນ
ຫ້ອງເຢັນຊັ້ນເທິງຂອງເພິ່ນ ແລະເອຮຸດທູນວ່າ “ຂ້ານ້ອຍມີພຣະຄຳສັ່ງຈາກພຣະເຈົ້າຖວາຍພະ
ອົງ” ເພິ່ນຈຶ່ງລຸກຂຶ້ນຈາກພະທີ່ນັ່ງ [21]ເອຮຸດກໍຍື່ນມືຊ້າຍຖອດດາບນັ້ນອອກຈາກຂາຂວາແທງ
ເຂົ້າໄປໃນທ້ອງຂອງເອັກໂລນ [22]ດາບຈົມເຂົ້າໄປໝົດທັງດ້າມ ໄຂມັນຫຸ້ມດາບໄວ້ ເພິ່ນກໍຖອດ
ດາບອອກຈາກທ້ອງຂອງຕົນບໍ່ໄດ້ ແລ້ວດາບໄດ້ຊອດອອກທາງຫວ່າງກາງຂາ [23]ແລ້ວເອຮຸດ
ອອກໄປທາງປະຕູໃຫຍ່ ແລະໄດ້ປິດປະຕູຫ້ອງຊັ້ນເທິງ ໃສ່ກຸນແຈໄວ້.
[24]ເມື່ອເອຮຸດໄປແລ້ວພວກຂ້າໃຊ້ຂອງກະສັດກໍເຂົ້າມາ ເບິ່ງ ເມື່ອພວກເຂົາເຫັນວ່າປະຕູ
ຫ້ອງຊັ້ນເທິງປິດໃສ່ກຸນແຈຢູ່ ພວກເຂົາທັງຫລາຍຄິດວ່າ “ພະອົງເພິ່ນກຳລັງຢູ່ທີ່ໃນຫ້ອງເຢັນ”
[25]ເມື່ອຄອຍຖ້າຢູ່ດົນຈົນລຳຄານ ກໍບໍ່ເຫັນມີໃຜເປີດປະຕູຫ້ອງຊັ້ນເທິງ ພວກເຂົາຈຶ່ງເອົາກຸນແຈ
ມາໄຂເປີດອອກ ເບິ່ງແມ ເຫັນເຈົ້ານາຍຂອງຕົນນອນສິ້ນຊີວິດຢູ່ເທິງພື້ນ [26]ເມື່ອພວກເຂົາຕ່າງ
ກໍຄອຍຖ້າກັນຢູ່ນັ້ນ ເອຮຸດກໍໜີໄປພົ້ນຈາກຮູບເຄົາລົບມາເຖິງເສອີຣາ.
[27]ຕໍ່ມາ ເມື່ອເພິ່ນມາເຖິງແລ້ວ ຈຶ່ງເປົ່າເຂົາສັດຂຶ້ນໃນເຂດພູເຂົາເອຟຣາຢິມ ແລ້ວຄົນອິ-
ສຣາເອນກໍຍ່າງໄປກັບເພິ່ນຈາກເຂດແດນພູເຂົາ [28]ເພິ່ນຈຶ່ງສັ່ງພວກເຂົາວ່າ “ຈົ່ງຕາມເຮົາມາ
ເພາະວ່າພຣະຜູ້ເປັນເຈົ້າໄດ້ມອບສັດຕູຂອງພວກເຈົ້າຄືຊົນຊາດໂມອາບໄວ້ໃນມືຂອງເຈົ້າແລ້ວ”
ພວກເຂົາທັງຫລາຍຈຶ່ງລົງຕິດຕາມເພິ່ນໄປ ແລະຍຶດທ່າຂ້າມແມ່ນ້ຳຢໍແດນສະກັດກັ້ນຄົນໂມ-
ອາບໄວ້ບໍ່ຍອມໃຫ້ໃຜຂ້າມໄປໄດ້ຈັກຄົນດຽວ. [29]ໃນຄາວນັ້ນ ພວກເຂົາປະຫານຄົນໂມອາບ
ປະມານໜຶ່ງໝື່ນຄົນ ລ້ວນແຕ່ເປັນຄົນໜຸ່ມ ແລະແຂງແຮງທັງໝົດ ບໍ່ພົ້ນໄປໄດ້ຈັກຄົນດຽວ
[30]ໂມອາບຈຶ່ງພ່າຍແພ້ຢູ່ໃນມືຂອງອິສຣາເອນໃນມື້ນັ້ນ ແລະແຜ່ນດິນນັ້ນກໍໄດ້ຢຸດສະຫງົບຢູ່
ແປດສິບປີ.

## ຜູ້ປົກຄອງຊຳຄາ

[31]ພາຍຫລັງເອຮຸດ ມີຊຳຄາລູກຊາຍອານາດຜູ້ຕໍ່ສູ້ຄົນຟີລິດສະຕິນຫົກຮ້ອຍຄົນ ເພິ່ນກໍເປັນ
ຜູ້ຊ່ວຍອິສຣາເອນໃຫ້ລອດພົ້ນຄືກັນ.

# ບົດທີ 4

## ເດໂບຣາ ແລະບາຣາກ

[1]ຫລັງຈາກເອຮຸດເສຍຊີວິດໄປແລ້ວ ພວກອິສຣາເອນກໍເຮັດຜິດຕໍ່ສູ້ພຣະຜູ້ເປັນເຈົ້າອີກ.

2ດັ່ງນັ້ນ ພຣະຜູ້ເປັນເຈົ້າຈຶ່ງຊົງມອບພວກເຂົາໄວ້ໃຕ້ອຳນາດຂອງຢາບິນ ເຈົ້າຊີວິດຊາວການາ-
ອານ ທີ່ປົກຄອງຢູ່ໃນເມືອງຮາໂຊ ແມ່ທັບຂອງເພິ່ນຊື່ວ່າ ສີເສຣາ ເປັນຊາວເມືອງຮາໂຣເຊັດ-
ຮາໂກຢີມ. 3ເຈົ້າຊີວິດ ຢາບິນ ມີລົດຮົບເກົ້າຮ້ອຍຄັນ ແລະໄດ້ບີບບັງຄັບຊາວ ອິສຣາເອນ ຢ່າງ
ໜັກຢູ່ເຖິງຊາວປີ ແລ້ວພວກ ອິສຣາເອນ ກໍຮ້ອງຂໍຄວາມຊ່ວຍເຫລືອຈາກພຣະຜູ້ເປັນເຈົ້າ.

4ໃນເວລານັ້ນ ນາງ ເດໂບຣາ ເມຍຂອງ ລັບປີໂດດ ເປັນຜູ້ປະກາດພຣະທຳ ແລະປົກຄອງ
ພວກ ອິສຣາເອນ. 5ພວກ ອິສຣາເອນ ໄດ້ມາຫາເພິ່ນຢູ່ກ້ອງຕົ້ນໄມ້ຂອງ ເດໂບຣາ ຢູ່ລະຫວ່າງ
ກາງເມືອງ ຣາມາ ແລະເມືອງ ເບັດເອນ ເພື່ອໃຫ້ເພິ່ນຕັດສິນຢ່າງຍຸດຕິທຳໃນບັນຫາຕ່າງໆ.

6ນາງ ເດໂບຣາ ຈຶ່ງໃຊ້ຄົນໄປຫາ ບາຣາກ ລູກຊາຍຂອງ ອາບີໂນອາມ ທີ່ມາຈາກເມືອງ ເກເດັດ
ໃນແຂວງ ນັບທາລີ ໂດຍບອກວ່າ, "ພຣະຜູ້ເປັນເຈົ້າ ຂອງພວກ ອິສຣາເອນ ໄດ້ສັ່ງ ແກ່ເຈົ້າວ່າ
ໃຫ້ເກນ ເອົາພວກຜູ້ຊາຍສິບພັນຄົນ ຈາກຕະກູນ ນັບທາລີ ແລະ ເຊບູລູນ ເພື່ອໄປຍັງພູຕາໂບ.
7ສ່ວນເຮົາຈະເຮັດໃຫ້ ສີເສຣາ ແມ່ທັບຂອງ ເຈົ້າຊີວິດ ຢາບິນ ພ້ອມທັງລົດຮົບ ແລະຝູງທະຫານ
ອອກໄປຕໍ່ສູ້ເຈົ້າຢູ່ຫ້ວຍ ກີໂຊນ ແຕ່ເຮົາຈະໃຫ້ເຈົ້າຊະນະລາວ." 8ບາຣາກ ໄດ້ເວົ້າຕໍ່ນາງ ເດໂບ-
ຣາ ວ່າ, "ຂ້ອຍຈະອອກໄປ ຖ້າວ່າເຈົ້າໄປກັບຂ້ອຍ ແຕ່ວ່າຖ້າເຈົ້າບໍ່ໄປ ຂ້ອຍກໍຈະບໍ່ໄປຄືກັນ."
9ນາງ ເດໂບຣາ ຈຶ່ງຕອບວ່າ, "ຕົກລົງ ຂ້ອຍຈະໄປກັບເຈົ້າ ແຕ່ວ່າເຈົ້າຈະບໍ່ໄດ້ຊື່ສຽງໃນໄຊຊະ-
ນະຄັ້ງນີ້ ເພາະວ່າ ພຣະຜູ້ເປັນເຈົ້າ ຈະມອບ ສີເສຣາ ໄວ້ໃນກຳມືຂອງແມ່ຍິງຄົນໜຶ່ງ" ແລ້ວນາງ
ເດໂບຣາ ກໍໄປເມືອງ ເກເດັດ ກັບ ບາຣາກ. 10ບາຣາກ ໄດ້ເກນເອົາສິບພັນຄົນຈາກຕະກູນ ເຊບູລູນ
ແລະ ນັບທາລີ ເພື່ອໃຫ້ຕິດຕາມເພິ່ນໄປເມືອງ ເກເດັດ ສ່ວນນາງ ເດໂບຣາ ກໍໄປຄືກັນ. 11ໃນ
ຂະນະນັ້ນ ເຮເບ ຊາວ ເກນີ ໄດ້ກາງຜ້າເຕັນພັກຢູ່ກ້ອງຕົ້ນໄມ້ໃຫຍ່ທີ່ ຊາອັນອັນນິມ ໃກ້ເມືອງ
ເກເດັດ ເພາະເພິ່ນໄດ້ແຍກໜີຈາກພວກ ເກນີ ທີ່ເປັນເຊື້ອສາຍ ໂຮບັບ ຜູ້ເປັນພໍ່ເຖົ້າຂອງ ໂມເຊ.

12ຕໍ່ມາ ມີຄົນບອກ ສີເສຣາ ວ່າ, "ບາຣາກ ລູກຊາຍຂອງ ອາບີໂນອາມ ໄດ້ໄປເຖິງພູຕາໂບ
ແລ້ວ." 13ສ່ວນ ສີເສຣາ ກໍເອົາລົດຮົບ ເກົ້າຮ້ອຍຄັນພ້ອມທັງກຳລັງພົນທັງໝົດ ຍົກທັບອອກຈາກ
ເມືອງ ຮາໂຣເຊັດ-ຮາໂກຢີມ ໄປຍັງຫ້ວຍ ກີໂຊນ. 14ຝ່າຍນາງ ເດໂບຣາ ໄດ້ບອກ ບາຣາກ ວ່າ,
"ຈົ່ງອອກໄປ ມື້ນີ້ເປັນມື້ທີ່ ພຣະຜູ້ເປັນເຈົ້າ ຊົງໃຫ້ເຈົ້າຊະນະ ສີເສຣາ ພຣະອົງຈະຊົງນຳໜ້າເຈົ້າ"
ດັ່ງນັ້ນ ບາຣາກ ຈຶ່ງນຳທະຫານສິບພັນຄົນລົງມາຈາກພູຕາໂບ ໄປຕໍ່ສູ້ ສີເສຣາ. 15ພຣະຜູ້ເປັນ-
ເຈົ້າກໍຊົງບັນດານໃຫ້ສີເສຣາ ພ້ອມດ້ວຍກອງທະຫານ ແລະລົດຮົບສັບສົນວຸ້ນວາຍກັນ ສີເສຣາ
ຈຶ່ງໂດດອອກຈາກລົດຮົບ ແລະແລ່ນໜີໄປ. 16ສ່ວນ ບາຣາກ ກໍໄລ່ຕິດຕາມລົດຮົບ ແລະກອງ
ທະຫານໄປ ຈົນຮອດເມືອງ ຮາໂຣເຊັດ-ຮາໂກຢີມ ແລ້ວທະຫານທັງໝົດຂອງ ສີເສຣາ ໄດ້ຖືກຂ້າ
ຕາຍບໍ່ເຫລືອຈັກຄົນ.

17ສ່ວນ ສີເສຣາ ໄດ້ປົບໜີໄປຍັງຕູບຜ້າເຕັນຂອງນາງ ຢາເອນ ເມຍຂອງ ເຮເບ ຊາວ ເກນີ
ທ່ານຜູ້ນີ້ພ້ອມທັງຄອບຄົວເຄີຍຜູກສຳພັນກັບ ຢາບິນ ເຈົ້າຊີວິດແຫ່ງ ຮາໂຊ ມາແລ້ວ. 18ນາງ ຢາ-
ເອນ ໄດ້ອອກມາພົບ ສີເສຣາ ແລະເວົ້າວ່າ, "ເຊີນທ່ານເຂົ້າມາທາງໃນ ແລະບໍ່ຕ້ອງຢ້ານຫຍັງ
ດອກ" ແລ້ວ ສີເສຣາ ກໍເຂົ້າໄປ ນາງ ຢາເອນ ຈຶ່ງເຊື່ອງລາວໄວ້ທາງຫລັງຜ້າກັ້ງ. 19ສີເສຣາ ໄດ້
ເວົ້າຕໍ່ນາງວ່າ, "ຂ້ອຍຂໍດື່ມນ້ຳແດ່ ເພາະວ່າຂ້ອຍຫິວນ້ຳຫລາຍ" ນາງ ຢາເອນ ຈຶ່ງໄຂຖົງນ້ຳນົມ

ອອກໃຫ້ດື່ມ ແລະເຊື່ອງລາວໄວ້ອີກ. [20]ແລ້ວສິເສຣາບອກນາງອີກວ່າ, “ຂໍໃຫ້ເຈົ້າອອກໄປຢືນ
ຢູ່ປາກປະຕູຜ້າເຕັນນີ້ ຖ້າມີຄົນມາຖາມວ່າ ມີຄົນມາລີ້ຢູ່ນີ້ບໍ? ໃຫ້ບອກເຂົາວ່າ ບໍ່ມີເດີ້.” [21]ຍ້ອນ
ຄວາມອິດເມື່ອຍ ສິເສຣາຈຶ່ງນອນຫລັບສະໜິດ ຝ່າຍນາງຢາເອນກໍເອົາຄ້ອນຕີ ແລະຫລັກໄມ້
ຜ້າເຕັນຍ່າງຄ່ອຍໆ ເຂົ້າໄປຂ້າລາວ ໂດຍຕອກໄມ້ຫລັກນັ້ນໃສ່ຂະໜັບຂອງສິເສຣາຈົນຊອດ
ຮອດຂີ້ດິນ. [22]ເມື່ອບາຣາກມາຊອກຫາສິເສຣາ ນາງຢາເອນກໍອອກໄປພົບເພິ່ນ ແລະເວົ້າວ່າ
“ເຊີນມາທາງນີ້ ຂ້ານ້ອຍຈະໃຫ້ທ່ານພົບຜູ້ທີ່ທ່ານກຳລັງຊອກຫາ” ດັ່ງນັ້ນ ເພິ່ນຈຶ່ງເຂົ້າໄປກັບ
ນາງ ແລະພົບສິເສຣານອນຕາຍຢູ່ໃນດິນ ໂດຍມີຫລັກໄມ້ສຽບຫົວຢູ່.
[23]ໃນມື້ນັ້ນ ພຣະເຈົ້າຊົງເຮັດໃຫ້ເຈົ້າຊີວິດຢາບິນທີ່ປົກຄອງພວກການາອານເສຍໄຊໃຫ້
ພວກອິສຣາເອນ. [24]ຝ່າຍພວກອິສຣາເອນກໍເພີ່ມກຳລັງຕໍ່ສູ້ຢາບິນ ເຈົ້າຊີວິດການາອານ ຈົນ
ພວກເຂົາໄດ້ທຳລາຍພະອົງເສຍ.

# ບົດທີ 5

## ເພງໄຊຊະນະຂອງເດໂບຣາ ແລະບາຣາກ

[1]ໃນມື້ນັ້ນ ນາງເດໂບຣາ ແລະບາຣາກຜູ້ເປັນລູກຊາຍຂອງອາບີໂນອາມໄດ້ຮ້ອງເພງວ່າ,

[2] ຈົ່ງສັນລະເສີນພຣະຜູ້ເປັນເຈົ້າ
ຊາວອິສຣາເອນເຕັມໃຈໃນການຮົບເສິກ
ພວກເຂົາຍິນດີຮັບອາສາສະໝັກ.
[3] ເຈົ້າຊີວິດທັງຫລາຍຈົ່ງຟັງເທີ້ນ
ແລະເຈົ້າຂຸນມູນນາຍຈົ່ງຟັງດ້ວຍ
ຂ້ານ້ອຍຈະຮ້ອງເພງ ແລະເສບດົນຕີ
ຖວາຍແດ່ພຣະຜູ້ເປັນເຈົ້າຂອງພວກອິສຣາເອນ.
[4] ຂ້າແດ່ພຣະຜູ້ເປັນເຈົ້າ ເມື່ອພຣະອົງສະເດັດມາຈາກພູເສອີ
ແລະສະເດັດອອກມາຈາກເຂດເມືອງເອໂດມນັ້ນ
ແຜ່ນດິນກໍຫວັ່ນໄຫວ ແລະຝົນກໍຕົກລົງມາຈາກທ້ອງຟ້າ
ຊຶ່ງເປັນນໍ້າທີ່ຍ້ອຍລົງມາຈາກກ້ອນເຜືອ
[5] ພູທັງຫລາຍກໍເຈື່ອນລົງຊ້ອງພຣະພັກພຣະຜູ້ເປັນເຈົ້າຂອງພູຊີນາຍ
ແລະພຣະພັກພຣະຜູ້ເປັນເຈົ້າຂອງພວກອິສຣາເອນ.
[6] ໃນສະໄໝຂອງຊຳຄາລູກຊາຍຂອງອານາດ
ແລະໃນສະໄໝຂອງຢາເອນນັ້ນ
ບໍ່ມີຍວດຍານພາຫະນະທ່ອງທ່ຽວໃນດິນແດນນີ້
ແລະຜູ້ທີ່ເຄີຍສັນຈອນໄປມາກໍທຽວທາງໂຄ້ງ.
[7] ເດໂບຣາເອີຍ ສ່ວນຫົວເມືອງຕ່າງໆ ຂອງພວກອິສຣາເອນ
ກໍຖືກປະປ່ອຍເປັນເມືອງຮ້າງເປົ່າຈົນວ່າເຈົ້າມາ

ມາເປັນຄືກັບແມ່ຂອງ ອິສຣາເອນ.
8 ເມື່ອພວກ ອິສຣາເອນ ໄດ້ເລືອກເອົາພະອົງໃໝ່
ກໍໄດ້ມີເສິກເກີດຂຶ້ນໃນແຜ່ນດິນ
ແຕ່ວ່າໃນຈຳນວນພວກຜູ້ຊາຍ ອິສຣາເອນ ສີ່ສິບພັນຄົນນີ້
ບໍ່ມີຜູ້ໃດຖືແຜ່ນເຫລັກຕ້ານທານ ຫລືຖືຫອກ.
9 ຈິດໃຈຂອງຂ້ອຍກໍຢູ່ກັບຜູ້ຄຸ້ມຄອງ ອິສຣາເອນ
ແລະປະຊາຊົນທີ່ມີໃຈອາສາສະໝັກ
ຈົ່ງສັນລະເສີນ ພຣະຜູ້ເປັນເຈົ້າ.
10 ພວກທີ່ຂີ່ລໍຂາວ ພວກທີ່ນັ່ງຢູ່ເທິງອານລໍ
ພ້ອມທັງຜູ້ທີ່ຍ່າງໄປມາ
ຈົ່ງຄິດເຖິງເລື່ອງນີ້.
11 ຈົ່ງຟັງເທີ້ນ! ສຽງໂຮຮ້ອງຍິນດີຂອງຝູງຊົນທີ່ຢູ່ອ້ອມຮອບນໍ້າສ້າງນັ້ນ
ໄດ້ກ່າວເຖິງໄຊຊະນະແຫ່ງ ພຣະຜູ້ເປັນເຈົ້າ
ແລະໄຊຊະນະຂອງພວກ ອິສຣາເອນ
ພວກໄພ່ພົນຂອງ ພຣະຜູ້ເປັນເຈົ້າກໍພາກັນຍ່າງລົງໄປຈາກເມືອງຂອງພວກເຂົາ.
12 ຈົ່ງຕື່ນເທີ້ນ ນາງ ເດໂບຣາ ຈົ່ງຕື່ນເທີ້ນ
ຈົ່ງຕື່ນເທີ້ນ ຈົ່ງຮ້ອງເພງ ຈົ່ງຕື່ນເທີ້ນ
ບາຣາກ ລູກຊາຍຂອງ ອາບີໂນອາມ ເອີຍ! ຈົ່ງລຸກຂຶ້ນ
ນຳເອົາພວກຊະເລີຍຂອງເຈົ້າອອກໄປ.
13 ແລ້ວຜູ້ທີ່ສັດຊື່ກໍມາຫາເຈົ້ານາຍຂອງພວກເຂົາ
ພວກໄພ່ພົນຂອງ ພຣະຜູ້ເປັນເຈົ້າກໍຟ້າວເຂົ້າມາສູ້ຮົບພວກເຂົາ.
14 ພວກເຂົາມາຈາກຕະກູນ ເອຟຣາຢິມ ມາສູ່ຮ່ອມພູ
ຕາມຫລັງພວກຕະກູນ ເບັນຢາມິນ ແລະປະຊາຊົນຂອງພວກເຂົາ
ສ່ວນພວກບັນຊາການນັ້ນມາຈາກ ມາກີ
ແລະພວກນາຍທະຫານມາຈາກ ເຊບູລູນ.
15 ຝ່າຍພວກຜູ້ນຳຂອງ ອິດຊາຄາ ກໍມານຳ ເດໂບຣາ
ຕະກູນ ອິດຊາຄາ ກໍມາ ແລະ ບາຣາກ ກໍມາຄືກັນ
ພວກ ອິດຊາຄາ ໄດ້ຕິດຕາມ ບາຣາກ ລົງໄປໃນຮ່ອມພູ
ແຕ່ວ່າຕະກູນ ຣູເບັນ ໄດ້ແຕກແຍກກັນ
ພວກເຂົາຈຶ່ງຕັດສິນໃຈມາບໍ່ໄດ້.
16 ເປັນຫຍັງພວກເຂົາຈຶ່ງຢູ່ນຳແຕ່ຝູງແກະ
ແລະຟັງຄົນລ້ຽງສັດເອີ້ນຝູງແກະນັ້ນ
ແມ່ນແທ້ ຕະກູນ ຣູເບັນ ໄດ້ແຕກແຍກກັນ

ພວກເຂົາຈຶ່ງຕັດສິນໃຈມາບໍ່ໄດ້.
17 ສ່ວນ ກີເລອາດ ນັ້ນໄດ້ພັກຢູ່ທາງທິດຕາເວັນອອກຂອງແມ່ນໍ້າ
ຢໍແດນ ແລະຕະກູນ ດານ ກໍຢູ່ຕາມທົ່ງຫຍ້າ
ຕະກູນ ອາເຊ ກໍຢູ່ຕາມແຄມທະເລ
ພວກເຂົາບໍ່ຍອມຈາກບ່ອນສະຫງົບຂອງພວກເຂົາໄປ.
18 ແຕ່ວ່າພວກ ເຊບູລູນ ແລະ ນັບທາລີ
ໄດ້ສ່ຽງຊີວິດຢູ່ຕາມສະໜາມຮົບ.
19 ດັ່ງນັ້ນ ພວກເຈົ້າຊີວິດກໍພາກັນມາຕໍ່ສູ້
ຢູ່ທີ່ຕານາກໃກ້ນໍ້າຫ້ວຍ ເມກິດໂດ
ແມ່ນພວກເຈົ້າຊີວິດຊາວ ການາອານ ທີ່ມາຕໍ່ສູ້
ແຕ່ວ່າພວກເຂົາບໍ່ໄດ້ຍຶດເອົາເງິນຄຳໄປນຳ.
20 ດວງດາວທັງຫລາຍກໍຈາກທ້ອງຟ້າລົງມາຕໍ່ສູ້
ຄືກັບວ່າພວກມັນໄດ້ຍ້າຍຜ່ານທ້ອງຟ້າມາ
ເພື່ອເຮັດເສິກຕໍ່ສູ້ ສີເສຣາ.
21 ພວກສັດຕູໄດ້ຖືກນໍ້າ ກີໂຊນ ພັດອອກໄປ
ຊຶ່ງເປັນສາຍນໍ້າຕັ້ງແຕ່ດັ້ງເດີມ
ສ່ວນຂ້ອຍຕ້ອງຍ່າງໄປຈົນສຸດກຳລັງ.
22 ສ່ວນມ້າທັງຫລາຍກໍແລ່ນຫອບໜີ
ເລັບຕີນຂອງມັນກໍຢັນຂີ້ດິນໄປ.
23 ທູດຂອງ ພຣະຜູ້ເປັນເຈົ້າ ກ່າວວ່າ,
“ຈົ່ງສາບແຊ່ງເມືອງ ເມໂຣດ
ຄຳສາບແຊ່ງຈົ່ງຕົກຖືກຜູ້ອາໄສຢູ່ໃນເມືອງນັ້ນ
ເພາະພວກເຂົາບໍ່ໄດ້ມາຊ່ອຍເຫລືອຝ່າຍ ພຣະຜູ້ເປັນເຈົ້າ
ເໝືອນດັ່ງພວກນັກຮົບທີ່ຕໍ່ສູ້ເພື່ອພຣະອົງ.”
24 ນາງ ຢາເອນ ພັນລະຍາຂອງ ເຮເບ ຊາວ ເກນີ
ເປັນຍິງຜູ້ໜຶ່ງທີ່ມີພຣະພອນຫລາຍກວ່າໝູ່
ເພິ່ນມີພຣະພອນຫລາຍກວ່າຜູ້ຍິງທຸກຄົນທີ່ຢູ່ໃນຕູບຜ້າເຕັນ.
25 ເມື່ອ ສີເສຣາ ດື່ມນໍ້າ ນາງ ຢາເອນ ກໍເອົານໍ້ານົມໃຫ້ດື່ມແທນ
ພ້ອມທັງນໍ້ານົມຂຸ້ນໃສ່ພາຊະນະອັນສວຍງາມ.
26 ສ່ວນ ສີເສຣາ ກໍລົ້ມລົງ
ແລະມືເບື້ອງໜຶ່ງອີກກໍຖືໄມ້ຄ້ອນ
ນາງຕີ ສີເສຣາ ຈົນຫົວແຕກ
ແລະແທງຂະໜັບຈົນຊອດ.

27 ສ່ວນ ສີເສຣາກໍລົ້ມລົງ
ແລະນອນຢຽດທີ່ຕີນຂອງນາງ
ທີ່ຕີນຂອງນາງ ຢາເອນ ບ່ອນທີ່ ສີເສຣາ ລົ້ມລົງ
ສີເສຣາ ໄດ້ລົ້ມຕາຍຢູ່ໃນດິນບ່ອນນັ້ນ.
28 ຝ່າຍແມ່ຂອງ ສີເສຣາ ກໍຫລຽວອອກມາທາງປ່ອງຢ້ຽມ
ລາວຈອບເບິ່ງທາງເບື້ອງຫລັງຂອງຕາໜ່າງ
ແລະເອີ້ນຖາມວ່າ "ເປັນຫຍັງລົດຮົບຂອງ ສີເສຣາ ຈຶ່ງມາຊ້າແທ້?
ເປັນຫຍັງມ້າຂອງລາວຈຶ່ງນານກັບມາແທ້?"
29 ພວກສະຕີທີ່ສະຫລາດຊຶ່ງເປັນໝູ່ຂອງລາວກໍຕອບວ່າ
ແລະລາວເອງກໍຕອບຕົວເອງຢູ່ເລື້ອຍໆວ່າ,
30 "ພວກເຂົາອາດຈະພົບສິ່ງທີ່ຍຶດມາໄດ້ ແລະແບ່ງປັນກັນ
ຄື ປັນຍິງສາວຜູ້ໜຶ່ງ ຫລືສອງຄົນແກ່ທະຫານທຸກຄົນ
ແລະເສື້ອຜ້າທີ່ມີລາຄາໃຫ້ແກ່ ສີເສຣາ
ຜ້າແສ່ວຖັກສຳລັບຄ້ອງຄໍ."
31 ຂ້າແດ່ ພຣະຜູ້ເປັນເຈົ້າ ຂໍຊົງໃຫ້ສັດຕູທັງຫລາຍຂອງພຣະອົງ
ຕາຍໄປດັ່ງດຽວກັນນີ້
ແຕ່ວ່າຂໍໃຫ້ຜູ້ຕິດສະໜິດກັບພຣະອົງສ່ອງແສງ
ເໝືອນດັ່ງຕາເວັນກຳລັງຂຶ້ນ!
ຕໍ່ມາ ຄວາມສະຫງົບສຸກກໍເກີດຂຶ້ນໃນປະເທດເປັນເວລາສີ່ສິບປີ.

# ບົດທີ 6

## ທູດຂອງພຣະຜູ້ເປັນເຈົ້າມາພົບກີເດໂອນ

1ຫລັງຈາກນີ້ ພວກ ອິສຣາເອນ ໄດ້ເຮັດບາບຕໍ່ສູ້ ພຣະຜູ້ເປັນເຈົ້າ ດັ່ງນັ້ນ ພຣະອົງຈຶ່ງຊົງ
ມອບພວກເຂົາໄວ້ໃນກຳມືຂອງພວກ ມີດີອານ ເປັນເວລາເຈັດປີ. 2ຝ່າຍພວກ ມີດີອານ ກໍມີກຳລັງ
ເໜືອກວ່າພວກເຂົາ ດັ່ງນັ້ນ ພວກເຂົາຈຶ່ງໄປລີ້ຢູ່ໃນຖໍ້າ ແລະໃນບ່ອນປອດໄພອື່ນໆ ຕາມໜ່ວຍ
ພູ. 3ທຸກ ເທື່ອທີ່ພວກ ອິສຣາເອນ ຫວ່ານ ເຂົ້າ ແລ້ວ ພວກ ມີດີອານ ກໍມາບຸກໂຈມຕີພວກ ເຂົາ.
4ພວກເຫລົ່ານີ້ພາກັນຕັ້ງຄ້າຍພັກຢູ່ໃນປະເທດນັ້ນ ພວກເຂົາທຳລາຍພືນລະປູກຕ່າງໆ ທາງທິດ-
ໃຕ້ຈົນເຖິງເຂດອ້ອມແອ້ມເມືອງ ຄາຊາ ພວກເຂົາບໍ່ໄດ້ປະສິ່ງໃດເລີຍເຫລືອໄວ້ໃຫ້ ພວກອິສຣາ-
ເອນ ຕະຫລອດທັງ ແກະ ງົວລໍທີ່ຈະລ້ຽງກໍບໍ່ມີ. 5ພວກນີ້ໄດ້ບຸກເຂົ້າມາທຳລາຍປະເທດ ອິສຣາ-
ເອນ ຢ່າງໜາແໜ້ນດັ່ງຝູງຕັກແຕນ ພ້ອມດ້ວຍຝູງສັດ ແລະຜ້າເຕັນ ທັງຄົນ ແລະອູດຂອງພວກ
ເຂົາກໍຫລາຍຈົນນັບບໍ່ໄດ້. 6ຍ້ອນພວກ ມີດີອານ ພວກ ອິສຣາເອນ ຈຶ່ງຕົກຢູ່ໃນຄວາມຂັດສົນ
ຫລາຍ ດັ່ງນັ້ນ ພວກເຂົາຈຶ່ງພາກັນຮ້ອງຂໍຄວາມຊ່ອຍເຫລືອຈາກ ພຣະຜູ້ເປັນເຈົ້າ.
7ເວລາທີ່ພວກ ອິສຣາເອນ ຮ້ອງທູນຕໍ່ ພຣະຜູ້ເປັນເຈົ້າ ຍ້ອນການຮຸກຮານຂອງພວກ ມີດີອານ

ນັ້ນ. [8]ພຣະຜູ້ເປັນເຈົ້າກໍຊົງໃຊ້ຜູ້ປະກາດພຣະທຳຜູ້ໜຶ່ງມາບອກພວກເຂົາວ່າ “ພຣະອົງຜູ້ຊົງເປັນ
ພຣະຜູ້ເປັນເຈົ້າ ຂອງພວກ ອິສຣາເອນ ຊົງກ່າວດັ່ງນີ້ ເຮົາໄດ້ນຳພວກເຈົ້າອອກມາຈາກການ
ເປັນທາດໃນປະເທດ ເອຢິບ. [9]ໄດ້ຊ່ອຍຊີວິດຂອງພວກເຈົ້າອອກຈາກເງື້ອມມືພວກ ເອຢິບ ແລະ
ອອກຈາກຜູ້ທີ່ຕໍ່ສູ້ພວກເຈົ້າຢູ່ທີ່ນີ້ ເຮົາໄດ້ໄລ່ພວກເຂົາໜີອອກຈາກພວກເຈົ້າ ແລະໄດ້ມອບດິນ-
ແດນຂອງພວກເຂົາໃຫ້ແກ່ພວກເຈົ້າ. [10]ເຮົາໄດ້ບອກພວກເຈົ້າວ່າ ເຮົາແມ່ນ ພຣະຜູ້ເປັນເຈົ້າ
ຂອງພວກເຈົ້າ ແລະພວກເຈົ້າບໍ່ຕ້ອງຂາບໄຫວ້ພະທັງຫລາຍຂອງພວກ ອະໂມຣິດ ຊຶ່ງພວກເຈົ້າ
ກຳລັງອາໄສຢູ່ໃນດິນແດນຂອງພວກເຂົານີ້ ແຕ່ວ່າພວກເຈົ້າບໍ່ໄດ້ເຊື່ອຟັງເຮົາເລີຍ.”

[11]ມື້ໜຶ່ງ ທູດຂອງ ພຣະຜູ້ເປັນເຈົ້າ ໄດ້ມານັ່ງຢູ່ກ້ອງຕົ້ນສົນ ໃກ້ບ້ານ ໂອຟຣາ ຊຶ່ງເປັນບ້ານ
ຂອງ ໂຢອາດ ຄົນໃນຕະກູນ ອາບີເອເຊ ກີເດໂອນ ລູກຊາຍຂອງ ໂຢອາດ ກໍເຂົ້າໄປຢູ່ໃນບ່ອນບີບ
ນໍ້າອະງຸ່ນ ເພື່ອລີ້ພວກ ມີດີອານ. [12]ທູດຂອງ ພຣະຜູ້ເປັນເຈົ້າ ໄດ້ປະກົດຕໍ່ລາວ ແລະເວົ້າວ່າ,
“ເຈົ້າເປັນຄົນກ້າຫານ ພຣະຜູ້ເປັນເຈົ້າ ຊົງສະຖິດຢູ່ກັບເຈົ້າ.” [13]ຝ່າຍ ກີເດໂອນ ຈຶ່ງເວົ້າຕໍ່ທູດອົງ
ນັ້ນວ່າ, “ຂ້ານ້ອຍຂໍຖາມວ່າ ຖ້າ ພຣະຜູ້ເປັນເຈົ້າ ຊົງສະຖິດຢູ່ນຳພວກຂ້ານ້ອຍແທ້ ເປັນຫຍັງ
ເຫດຮ້າຍທັງໝົດນີ້ຈຶ່ງເກີດຂຶ້ນແກ່ພວກຂ້ານ້ອຍ? ແລະການອັດສະຈັນຕ່າງໆ ທີ່ພວກປູ່ຍ່າຕາ
ຍາຍໄດ້ເລົ່າໃຫ້ພວກຂ້ານ້ອຍຟັງນັ້ນ ເປັນຢ່າງໃດ? ຄືການທີ່ພຣະອົງຊົງນຳໜ້າພວກຂ້ານ້ອຍ
ອອກມາຈາກປະເທດ ເອຢິບ ນັ້ນ ແຕ່ດຽວນີ້ ພຣະຜູ້ເປັນເຈົ້າ ຊົງປະຖິ້ມພວກຂ້ານ້ອຍແລ້ວ ແລະ
ໄດ້ມອບພວກຂ້ານ້ອຍໄວ້ໃຕ້ອຳນາດພວກ ມີດີອານ.” [14]ພຣະຜູ້ເປັນເຈົ້າ ຈຶ່ງຊົງສັ່ງຕໍ່ ເພິ່ນວ່າ,
“ເຈົ້າຈົ່ງໄປຊ່ອຍຊີວິດພວກ ອິສຣາເອນ ອອກຈາກອຳນາດຂອງພວກ ມີດີອານ ດ້ວຍກຳລັງຂອງ
ເຈົ້າເອງ ເຮົາຈະເປັນຜູ້ສົ່ງເຈົ້າໄປ.” [15]ກີເດໂອນ ໄດ້ທູນຕອບວ່າ, “ຂ້ານ້ອຍຈະຊ່ອຍຊີວິດພວກ
ອິສຣາເອນ ໄດ້ຢ່າງໃດ ແລະຂ້ານ້ອຍເອງກໍເປັນຄົນທີ່ຂາດຄວາມສຳຄັນໃນຄອບຄົວຂ້ານ້ອຍ.”
[16]ພຣະຜູ້ເປັນເຈົ້າ ຈຶ່ງຊົງກ່າວຕໍ່ ເພິ່ນວ່າ, “ເຈົ້າສາມາດເຮັດສິ່ງນີ້ໄດ້ ເພາະເຮົາຈະສະຖິດຢູ່ນຳ
ເຈົ້າ ເຈົ້າຈະທຳລາຍພວກ ມີດີອານ ໄດ້ງ່າຍທີ່ສຸດ ຄືກັບວ່າພວກເຂົາມີພຽງຄົນດຽວເທົ່ານັ້ນ.”
[17]ກີເດໂອນ ໄດ້ທູນຕອບວ່າ, “ຖ້າທ່ານ ໂຜດເມດຕາຂ້ານ້ອຍ ຂໍໃຫ້ຂ້ານ້ອຍພິສູດເຫັນຄວາມຈິງ
ວ່າ ແມ່ນ ພຣະຜູ້ເປັນເຈົ້າ ແທ້ຈິງທີ່ຊົງສັ່ງໃຫ້ແກ່ຂ້ານ້ອຍ. [18]ຂໍທ່ານຈົ່ງຢ່າຟ້າວໜີຈາກບ່ອນນີ້
ຈົນກວ່າຂ້ານ້ອຍ ຈະ ນຳ ເອົາ ເຄື່ອງຖວາຍ ມາ ໃຫ້ ແກ່ທ່ານ” ແລ້ວ ພຣະຜູ້ເປັນເຈົ້າ ຊົງກ່າວວ່າ,
“ເຮົາຈະພັກຢູ່ທີ່ນີ້ຈົນກວ່າເຈົ້າຈະກັບມາ.”

[19]ຄັນແລ້ວ ກີເດໂອນ ກໍໄປຂ້າເອົາແບ້ໜຸ່ມໂຕໜຶ່ງຈັດແຈງເປັນອາຫານ ແລະເຮັດເຂົ້າຈີ່ບໍ່ມີ
ເຊື້ອແປ້ງສາມໝື່ນ ຕໍ່ມາ ເພິ່ນໄດ້ຈັດຊີ້ນໃສ່ກະຕ່າ ແລະນໍ້າແກງໃສ່ໝໍ້ ແລ້ວນຳເອົາສິ່ງເຫລົ່າ-
ນັ້ນມາມອບໃຫ້ທູດຂອງ ພຣະຜູ້ເປັນເຈົ້າ ຢູ່ກ້ອງຕົ້ນສົນ. [20]ຝ່າຍທູດອົງນັ້ນຈຶ່ງກ່າວ ແກ່ເພິ່ນວ່າ,
“ຈົ່ງເອົາຊີ້ນ ແລະເຂົ້າຈີ່ວາງໄວ້ເທິງໂງ່ນຫີນ ແລ້ວຖອກນໍ້າແກງລົງໃສ່” ກີເດໂອນກໍປະຕິບັດ
ຕາມ. [21]ທູດຂອງ ພຣະຜູ້ເປັນເຈົ້າ ຊົງ ເອົາປາຍໄມ້ເທົ້າຂອງຕົນ ແຕະຕ້ອງຊີ້ນ ແລະ ເຂົ້າຈີ່ນັ້ນ
ໃນທັນໃດນັ້ນ ໄຟໄດ້ລຸກຂຶ້ນຈາກໂງ່ນຫີນ ແລະໄໝ້ຊີ້ນກັບເຂົ້າຈີ່ຈົນໝົດ ຕໍ່ມາທູດຂອງ ພຣະຜູ້-
ເປັນເຈົ້າກໍຫາຍຕົວໄປ.

[22]ຝ່າຍ ກີເດໂອນ ກໍຮູ້ສຶກໃນໃຈວ່າ ທູດອົງນັ້ນເປັນທູດຂອງ ພຣະຜູ້ເປັນເຈົ້າ ແທ້ ເພິ່ນຈຶ່ງເວົ້າ

ດ້ວຍຄວາມຢ້ານ ແລະຕົກໃຈວ່າ, "ພຣະຜູ້ເປັນເຈົ້າ ຂອງຂ້ານ້ອຍ ຂ້ານ້ອຍໄດ້ເຫັນທູດຂອງ
ພຣະອົງຕໍ່ໜ້າແລ້ວ." 23ແຕ່ພຣະຜູ້ເປັນເຈົ້າ ຊົງບອກເພິ່ນວ່າ, "ບໍ່ເປັນຫຍັງດອກ ຢ່າສູ່ຢ້ານ
ເຈົ້າຈະບໍ່ຕາຍ." 24ແລ້ວ ກິເດໂອນ ໄດ້ສ້າງແທ່ນບູຊາໃຫ້ພຣະຜູ້ເປັນເຈົ້າຢູ່ທີ່ນັ້ນ ແລະໃສ່ຊື່ວ່າ,
"ພຣະຜູ້ເປັນເຈົ້າ ເປັນຄວາມສະຫງົບສຸກ" ແທ່ນບູຊານີ້ຢູ່ໃນບ້ານ ໂອຟຣາ ແລະເປັນຂອງຊາວ
ອາບີເອເຊ ຈົນເທົ່າທຸກວັນນີ້.

25ໃນຄ່ຳຄືນຂອງມື້ນັ້ນ ພຣະຜູ້ເປັນເຈົ້າ ຊົງບອກເພິ່ນວ່າ "ຈົ່ງເອົາງົວເຖິກຂອງພໍ່ເຈົ້າ ແລະ
ງົວເຖິກໂຕອື່ນໆ ທີ່ມີອາຍຸເຈັດປີ ພ້ອມທັງທຳລາຍແທ່ນບູຊາທີ່ພໍ່ເຈົ້າເຮັດໄວ້ເພື່ອ ພະບາອານ
ແລ້ວຕັດຫລັກໄມ້ສັກສິດຢູ່ທາງຂ້າງນັ້ນອອກ. 26ຈົ່ງສ້າງ ແທ່ນບູຊາຢ່າງ ແໜ້ນໜາໃຫ້ແກ່ພຣະ-
ຜູ້ເປັນເຈົ້າ ຂອງເຈົ້າຢູ່ເທິງຈອມໂພນນີ້ ແລ້ວເອົາງົວເຖິກໂຕທີສອງເຜົາຖວາຍບູຊາເທິງແທ່ນນັ້ນ
ໂດຍເອົາຫລັກໄມ້ສັກສິດທີ່ເຈົ້າຕັດລົງນັ້ນເຮັດຟືນ." 27ຝ່າຍ ກິເດໂອນ ກໍເລືອກເອົາຄົນໃຊ້ສິບຄົນ
ແລະປະຕິບັດຕາມພຣະຜູ້ເປັນເຈົ້າທີ່ຊົງບອກໄວ້ ເພິ່ນບໍ່ສາມາດເຮັດວຽກໃນກາງເວັນໄດ້ ເພາະ
ຢ້ານຄົນໃນຄອບຄົວຂອງຕົນແລະປະຊາຊົນໃນເມືອງເຫັນ ສະນັ້ນ ເພິ່ນຈຶ່ງເຮັດໃນເວລາກາງ-
ຄືນ.

28ເມື່ອຕອນເຊົ້າມາ ປະຊາຊົນໃນເມືອງນັ້ນໄດ້ລຸກແຕ່ເດິກ ພວກເຂົາໄດ້ເຫັນແທ່ນບູຊາຂອງ
ພະບາອານ ແລະເຫັນຫລັກໄມ້ສັກສິດຖືກທຳລາຍລົງ ແລ້ວໄດ້ເຫັນງົວເຖິກໄໝ້ຢູ່ເທິງແທ່ນບູ-
ຊາທີ່ສ້າງຂຶ້ນໃໝ່ນັ້ນ ພວກເຂົາຈຶ່ງຖາມກັນວ່າ, "ແມ່ນໃຜເຮັດສິ່ງນີ້?" 29ເມື່ອພວກເຂົາສືບຖາມ
ກໍພົບວ່າ ແມ່ນ ກິເດໂອນ ລູກຊາຍຂອງ ໂຢອາດ ໄດ້ເປັນຜູ້ເຮັດສິ່ງນີ້. 30ພວກເຂົາຈຶ່ງເວົ້າຕໍ່ ໂຢ-
ອາດ ວ່າ, "ເອົາລູກຊາຍຂອງເຈົ້າອອກມານອກພີ້ ພວກເຮົາຈະຂ້າລາວຖິ້ມ ເພາະລາວເປັນຄົນ
ທຳລາຍແທ່ນບູຊາຂອງ ພະບາອານ ແລະຕັດຫລັກໄມ້ສັກສິດຢູ່ທາງຂ້າງນັ້ນອອກ." 31ແຕ່ ໂຢ-
ອາດ ໄດ້ຕອບທຸກຄົນທີ່ພາກັນມາຟ້ອງນັ້ນວ່າ, "ພວກເຈົ້າມາຕໍ່ວ່າຂ້ອຍ ແທນ ພະບາອານ ບໍ?
ພວກເຈົ້າປ້ອງກັນ ພະບາອານ ບໍ? ຖ້າວ່າຜູ້ໃດຕໍ່ວ່າແທນມັນ ຜູ້ນັ້ນຈະຖືກຂ້າຖິ້ມກ່ອນຮຸ່ງເຊົ້າ
ຄັນວ່າ ພະບາອານ ເປັນ ພຣະເຈົ້າ ຈົ່ງໃຫ້ມັນປ້ອງກັນຕົວມັນເອງ ເພາະເປັນແທ່ນບູຊາຂອງມັນ
ທີ່ຖືກທຳລາຍລົງ." 32ຈາກນັ້ນມາຄົນທັງຫລາຍກໍເອີ້ນ ກິເດໂອນ ວ່າ ເຢຣຸບ-ບາອານ ເພາະເພິ່ນ
ໄດ້ທຳລາຍແທ່ນບູຊາຂອງ ພະບາອານ ແລະເວົ້າວ່າ, "ຈົ່ງໃຫ້ ພະບາອານ ປ້ອງກັນຕົວມັນເອງ."

33ແລ້ວພວກ ມີດີອານ ທຸກໆ ຄົນ ພ້ອມທັງຊາວ ອາມາເລັກ ແລະເຜົ່າຕ່າງໆ ທີ່ຢູ່ຕາມຖິ່ນ
ແຫ້ງແລ້ງ ກັນດານ ກໍພາກັນ ຂ້າມ ແມ່ນ້ຳ ຢໍແດນ ມາພ້ອມພຽງກັນ ແລ້ວຕັ້ງຄ້າຍພັກຢູ່ຮ່ອມພູ
ເຢດຊະເຣເອນ. 34ພຣະວິນຍານ ຂອງ ພຣະຜູ້ເປັນເຈົ້າ ໄດ້ສະຖິດຢູ່ນຳ ກິເດໂອນ ກິເດໂອນ ກໍ
ເປົ່າແກເອີ້ນເອົາຝູງຊົນ ອາບີເອເຊ ໃຫ້ຕິດຕາມຕົນໄປ. 35ຕໍ່ມາ ເພິ່ນໄດ້ສົ່ງຄົນນຳຂ່າວໄປບອກ
ທົ່ວເຂດແດນຂອງຕະກູນ ມານາເຊ ຕະກູນ ອາເຊ ເຊບູລູນ ແລະ ນັບທາລີ ເພື່ອໃຫ້ພວກເຫລົ່າ
ນີ້ຕິດຕາມເພິ່ນໄປ.

36ພວກເຂົາກໍຕິດຕາມເພິ່ນໄປ ຈາກນັ້ນ ກິເດໂອນ ໄດ້ທູນ ພຣະເຈົ້າ ວ່າ, "ພຣະອົງຊົງກ່າວວ່າ
ພຣະອົງຕ້ອງການໃຫ້ຂ້ານ້ອຍຊ່ອຍຊີວິດພວກ ອິສຣາເອນ. 37ສະນັ້ນ ຂ້ານ້ອຍຈະເອົາຂົນແກະ
ວາງໄວ້ເທິງດິນ ບ່ອນທີ່ພວກຂ້ານ້ອຍຟາດເຂົ້າ ຖ້າວ່າມື້ເຊົ້າມານ້ຳໝອກຕົກຖືກແຕ່ຂົນແກະ

ເທົ່ານັ້ນ ແຕ່ດິນຍັງແຫ້ງຢູ່ຄືເກົ່າ ຂ້ານ້ອຍຈຶ່ງຈະຮູ້ວ່າ ພຣະອົງຊົງຕ້ອງການໃຫ້ຂ້ານ້ອຍຊ່ອຍຊີ-
ວິດພວກອິສຣາເອນແທ້.” [38]ແລ້ວເຫດການກໍເປັນຢ່າງນັ້ນແທ້ ເມື່ອກີເດໂອນລຸກມາແຕ່ເດິກ
ໃນເຊົ້າມື້ໃໝ່ເພິ່ນກໍເອົາຂົນແກະນັ້ນມາປັ້ນ ນໍ້າໄດ້ໄຫລອອກມາຈົນເຕັມຊາມ. [39]ເພິ່ນຈຶ່ງທູນ
ພຣະເຈົ້າອີກວ່າ, “ຂໍຢ່າຊົງພຣະພິໂລດຂ້ານ້ອຍທ້ອນ ຂໍໂຜດໃຫ້ຂ້ານ້ອຍໄດ້ເວົ້າຕື່ມອີກເປັນ
ເທື່ອສຸດທ້າຍ ຄືຂ້ານ້ອຍຈະທົດລອງເບິ່ງຂົນແກະອີກເທື່ອໜຶ່ງ ໃນຄັ້ງນີ້ໃຫ້ຂົນແກະແຫ້ງຢູ່ ແຕ່
ໃຫ້ນໍ້າໝອກຕົກລົງໃສ່ແຕ່ດິນເທົ່ານັ້ນ.” [40]ໃນຄືນນັ້ນ ພຣະເຈົ້າໄດ້ຊົງເຮັດການນັ້ນ ໂດຍຊົງໃຫ້
ຂົນແກະແຫ້ງ ແຕ່ໃຫ້ດິນເຕັມໄປດ້ວຍນໍ້າໝອກ.

# ບົດທີ 7

## ກີເດໂອນຊະນະພວກມີດີອານ

[1]ເຢຣຸບ-ບາອານ (ຄືກີເດໂອນ) ພ້ອມດ້ວຍທະຫານທັງໝົດຂອງລາວໄດ້ລຸກແຕ່ເຊົ້າໄປຕັ້ງ
ຄ້າຍພັກອາໄສຢູ່ທາງບໍ່ນໍ້າຮາໂຣດ ສ່ວນຄ້າຍພັກຂອງພວກມີດີອານກໍຕັ້ງຢູ່ຮ່ອມພູທາງທິດ-
ເໜືອໃກ້ໆ ພູໂມເຣ. [2]ພຣະຜູ້ເປັນເຈົ້າຊົງບອກກີເດໂອນວ່າ, “ປະຊາຊົນທີ່ມານໍາເຈົ້າມີຫລາຍ
ໂພດ ເຮົາບໍ່ຕ້ອງການປານນັ້ນເພື່ອເອົາຊະນະພວກມີດີອານ ເພາະເມື່ອໄຊຊະນະແລ້ວຢ້ານ
ພວກເຂົາອວດວ່າ ພວກເຂົາຊະນະດ້ວຍກໍາລັງຂອງຕົນເອງ ໂດຍບໍ່ຄິດເຖິງການຊ່ອຍເຫລືອ
ຂອງເຮົາ. [3]ສະນັ້ນ ເຈົ້າຈົ່ງບອກປະຊາຊົນວ່າ ຖ້າຜູ້ໃດຢ້ານ ຈົ່ງກັບຄືນຈາກພູກີເລອາດນັ້ນ
ເສຍ” ດັ່ງນັ້ນຈຶ່ງມີຜູ້ກັບຄືນເມືອຊາວສອງພັນຄົນ ແລະຍັງເຫລືອພຽງແຕ່ໝື່ນຄົນເທົ່ານັ້ນ.
[4]ພຣະຜູ້ເປັນເຈົ້າຊົງກ່າວຕໍ່ກີເດໂອນວ່າ, “ພວກນີ້ຍັງມີຢູ່ຫລາຍໂພດ ຈົ່ງພາພວກເຂົາລົງໄປ
ແຄມນໍ້າ ແລ້ວເຮົາຈະຄັດເລືອກພວກເຂົາໃຫ້ເຈົ້າຢູ່ທີ່ນັ້ນ ຖ້າເຮົາບອກຜູ້ໃດໄປກັບເຈົ້າ ລາວຈະ
ໄປທັນທີ ຖ້າວ່າເຮົາບອກບໍ່ໃຫ້ຜູ້ໃດໄປກັບເຈົ້າ ລາວກໍຈະບໍ່ໄປເດັດຂາດ.” [5]ດັ່ງນັ້ນ ກີເດໂອນ
ຈຶ່ງນໍາຊາວອິສຣາເອນໄປແຄມນໍ້າ ແລ້ວພຣະຜູ້ເປັນເຈົ້າຊົງບອກລາວວ່າ, “ຈົ່ງແຍກພວກທີ່
ດື່ມນໍ້າດ້ວຍລີ້ນຄືກັນກັບໝາ ອອກຈາກພວກທີ່ຄຸເຂົ່າລົງດື່ມ.” [6]ດັ່ງນັ້ນ ຈໍານວນຜູ້ທີ່ເອົາມືກອບ
ນໍ້າຂຶ້ນມາເລຍກິນມີຢູ່ສາມຮ້ອຍຄົນ ສ່ວນພວກທີ່ເຫລືອນັ້ນແມ່ນຄຸເຂົ່າລົງດື່ມ. [7]ພຣະຜູ້ເປັນເຈົ້າ
ຈຶ່ງຊົງກ່າວຕໍ່ກີເດໂອນວ່າ, “ເຮົາຈະຊ່ອຍຊີວິດເຈົ້າໄວ້ ແລະໃຫ້ເຈົ້າຊະນະພວກມີດີອານດ້ວຍ
ຄົນຈໍານວນສາມຮ້ອຍຄົນທີ່ກອບນໍ້າເລຍກິນນັ້ນ ແລ້ວໃຫ້ພວກທີ່ຍັງເຫລືອກັບຄືນເມືອໝົດ.”
[8]ກີເດໂອນກໍສັ່ງພວກອິສຣາເອນກັບຄືນເມືອໝົດ ເວັ້ນໄວ້ແຕ່ພວກສາມຮ້ອຍຄົນເທົ່ານັ້ນທີ່ຍັງ
ເຫລືອຢູ່ ພວກນີ້ໄດ້ຈັດເອົາສະບຽງອາຫານ ແລະແກະຂອງໃຜລາວ ສ່ວນພວກມີດີອານໄດ້ຕັ້ງ
ຄ້າຍພັກຢູ່ຮ່ອມພູທາງເບື້ອງລຸ່ມອິສຣາເອນ.

[9]ໃນຄືນມື້ນັ້ນ ພຣະຜູ້ເປັນເຈົ້າຊົງກ່າວຕໍ່ກີເດໂອນວ່າ, “ຈົ່ງບຸກໂຈມຕີຄ້າຍຂອງພວກເຂົາ
ເທີ້ນ ເຮົາຈະໃຫ້ເຈົ້າຊະນະພວກເຂົາ. [10]ແຕ່ຖ້າເຈົ້າບໍ່ກ້າລົງໄປຕໍ່ສູ້ ໃຫ້ເຈົ້າ ແລະຄົນໃຊ້ຂອງ
ເຈົ້າຜູ້ຊື່ວ່າປູຣາ ລົງໄປສືບເບິ່ງເສຍກ່ອນ. [11]ເຈົ້າຈະໄດ້ຍິນວ່າພວກເຂົາເວົ້າກັນຫຍັງແດ່ ແລ້ວ
ເຈົ້າຈະກ້າຫານບຸກໂຈມຕີຄ້າຍນັ້ນ” ດັ່ງນັ້ນ ກີເດໂອນ ແລະຄົນໃຊ້ປູຣາຈຶ່ງພາກັນລົງໄປຍັງ
ເຂດແດນຄ້າຍພັກຂອງສັດຕູ. [12]ຝ່າຍພວກມີດີອານ ພວກອາມາເລັກ ແລະຊາວເຜົ່າຕ່າງໆ

ທີ່ຢູ່ຕາມຖິ່ນ ແຫ້ງແລ້ງກັນດານ ໄດ້ຢູ່ຂະຫຍາຍອອກໄປທາງຮ່ອມພູເໝືອນດັ່ງຝູງຕັກແຕນ
ພວກເຂົາມີຝູງອູດຫລາຍຄືກັບເມັດດິນຊາຍເທິງແຄມທະເລ. 13ເມື່ອ ກີເດໂອນ ມາຮອດກໍໄດ້ຍິນ
ຊາຍຜູ້ໜຶ່ງເລົ່າຄວາມຝັນຂອງຕົນສູ່ໝູ່ຟັງວ່າ, “ຂ້ອຍໄດ້ຝັນວ່າ ມີເຂົ້າຈີ່ກ້ອນໜຶ່ງທີ່ເຮັດດ້ວຍເຂົ້າ
ເດືອຍກິ້ງເຂົ້າມາໃນຄ້າຍພັກຂອງເຮົາ ເຂົ້າຈີ່ກ້ອນນີ້ຕຳຜ້າເຕັນຂວ້ຳເພພັງລົງໝົດ.” 14ໝູ່ຂອງ
ລາວຈຶ່ງຕອບວ່າ, “ອັນນີ້ຕ້ອງໝາຍເຖິງດາບຂອງ ກີເດໂອນ ຊາວ ອິສຣາເອນ ຊຶ່ງເປັນລູກຊາຍ
ຂອງ ໂຢອາດ ຄົງບໍ່ໝາຍເຖິງສິ່ງອື່ນໄປໄດ້ ພຣະເຈົ້າ ໄດ້ຊົງໂຜດໃຫ້ເພິ່ນຊະນະກອງທັບທັງ
ໝົດຂອງພວກເຮົາແລ້ວ.”

15ສ່ວນ ກີເດໂອນ ເມື່ອໄດ້ຍິນເລື່ອງຄວາມຝັນພ້ອມທັງຄວາມໝາຍເພິ່ນກໍຄຸເຂົ່າລົງຂາບໄຫວ້
ພຣະເຈົ້າ ແລ້ວເພິ່ນກໍກັບຄືນເມືອຫາຄ້າຍພັກຊາວ ອິສຣາເອນ ແລະເວົ້າວ່າ, “ຈົ່ງລຸກຂຶ້ນ
ພຣະຜູ້ເປັນເຈົ້າ ຊົງປະທານໃຫ້ພວກເຈົ້າຊະນະກອງທັບພວກ ມີດີອານ ແລ້ວ.” 16ຄັນແລ້ວ ເພິ່ນ
ກໍແບ່ງພວກສາມຮ້ອຍຄົນນັ້ນອອກເປັນສາມໝວດ ໂດຍເອົາແກແຈກໃຫ້ຄົນລະອັນພ້ອມທັງໄຫ
ໃສ່ກະບອງ ຜູ້ລະໜ່ວຍ. 17ເພິ່ນໄດ້ບອກພວກເຂົາວ່າ, “ຈົ່ງຄອຍຖ້າເບິ່ງວ່າ ເມື່ອຂ້ອຍໄປຮອດ
ຄ້າຍພັກແລ້ວ ຂ້ອຍຈະເຮັດຢ່າງໃດ. 18ຖ້າວ່າຂ້ອຍ ແລະຄະນະຂອງຂ້ອຍພາກັນເປົ່າແກຂຶ້ນ
ໃຫ້ພວກເຈົ້າເປົ່າແກຂອງພວກເຈົ້າຕອບໂລດ ແລ້ວໃຫ້ທຸກຄົນທີ່ຢູ່ອ້ອມຄ້າຍພັກຮ້ອງຂຶ້ນວ່າ
ເພື່ອ ພຣະຜູ້ເປັນເຈົ້າ ແລະ ກີເດໂອນ!”

19ຝ່າຍ ກີເດໂອນ ພ້ອມທັງພວກຂອງລາວຮ້ອຍຄົນ ກໍຮອດແຄມຄ້າຍພັກໃນເວລາກ່ອນທ່ຽງ
ຄືນ ຊຶ່ງເປັນເວລາປ່ຽນຄົນຍາມໃໝ່ ພວກເຂົາເປົ່າແກຂຶ້ນ ແລະທັບໄຫທີ່ພວກເຂົາຖືໄປນັ້ນ.
20ໝົດທັງສາມໝວດກໍເປົ່າແກຂຶ້ນ ແລະທັບໄຫຂອງໃຜລາວ ມືຊ້າຍຂອງພວກເຂົາຖືກະບອງ
ແລະມືຂວາຖືແກ ພ້ອມທັງຮ້ອງວ່າ, “ດາບ! ເພື່ອ ພຣະຜູ້ເປັນເຈົ້າ ແລະ ກີເດໂອນ.” 21ທະຫານ
ອິສຣາເອນ ທຸກໆ ຄົນກໍຢືນປະຈຳຢູ່ບ່ອນຂອງໃຜລາວອ້ອມຮອບຄ້າຍພັກນັ້ນ ສ່ວນພວກທະ-
ຫານ ມີດີອານ ທັງໝົດ ໄດ້ແລ່ນໄປພ້ອມທັງຮ້ອງສຽງດັງສະໜັ່ນ. 22ເມື່ອພວກສາມຮ້ອຍເປົ່າແກ
ຂອງພວກເຂົາຂຶ້ນ ພຣະຜູ້ເປັນເຈົ້າ ກໍບັນດານໃຫ້ຄົນຢູ່ໃນຄ້າຍນັ້ນຈັບດາບຕໍ່ສູ້ກັນ ແລະກັນ
ພວກເຂົາພາກັນແລ່ນໄປທາງເມືອງ ເຊເຣຣາ ໄປເມືອງ ເບັດ-ຊິດຕາ ແລະເມືອງ ອາເບັນ ເມໂຮ
ລາໃກ້ບ້ານ ຕັບບັດ 23ພວກ ອິສຣາເອນ ທີ່ມາຈາກຕະກູນ ນັບທາລີ ຕະກູນ ອາເຊ ແລະທຸກໆ
ຄົນທີ່ມາຈາກ ມານາເຊ ໄດ້ອອກມາໄລ່ຕິດຕາມພວກ ມີດີອານ ໄປ.

24ກີເດໂອນ ກໍສົ່ງຄົນນຳຂ່າວໄປບອກທົ່ວທັງເຂດພູ ເອຟຣາຢິມ ວ່າ, “ຈົ່ງພາກັນມາຕໍ່ສູ້ພວກ
ມີດີອານ ໃຫ້ພາກັນໄປປະຈຳຢູ່ຕາມແຄມແມ່ນ້ຳຢໍແດນ ແລະຕາມທາງສາຍນ້ຳຕ່າງໆ ຈົນເຖິງ
ເບັດ-ບາຣາ ເພື່ອລັດສະກັດພວກເຂົາໄວ້” ສ່ວນພວກ ເອຟຣາຢິມ ກໍມາຕາມຄຳຮຽກຮ້ອງ ພວກ
ເຂົາມາປະຈຳທີ່ທ່າແມ່ນ້ຳຢໍແດນ ແລະຕາມສາຍນ້ຳຕ່າງໆ ຈົນຮອດເຂດ ເບັດ-ບາຣາ. 25ພວກ
ເຂົາຈັບຫົວໜ້າພວກ ມີດີອານ ໄດ້ສອງຄົນ ຄື ໂອເຣັບ ແລະ ເຊເອບ ແລ້ວຂ້າ ໂອເຣັບ ຢູ່ເທິງຫີນ
ດານ ແຫ່ງໜຶ່ງ ຊຶ່ງຕໍ່ມາເອີ້ນວ່າຫີນ ດານ ໂອເຣັບ ແລະຂ້າ ເຊເອບ ຢູ່ເທິງຫີນ ດານ ແຫ່ງໜຶ່ງ ຊຶ່ງ
ຕໍ່ມາເອີ້ນບ່ອນນັ້ນວ່າ ເຊເອບ ແລ້ວພວກເຂົາກໍຂັບໄລ່ກວາດລ້າງພວກ ມີດີອານ ຕໍ່ໄປ ພ້ອມທັງ
ຖືເອົາຫົວຂອງ ໂອເຣັບ ກັບ ເຊເອບ ໄປໃຫ້ ກີເດໂອນ ຊຶ່ງຢູ່ທາງທິດຕາເວັນອອກຂອງແມ່ນ້ຳຢໍ-

ແດນ ເບື້ອງນັ້ນ.

# ບົດທີ 8

## ການເສຍໄຊຄັ້ງສຸດທ້າຍຂອງພວກມີດີອານ

1ຄັນຕໍ່ມາ ພວກ ເອຟຣາຢິມ ໄດ້ເວົ້າຕໍ່ ກີເດໂອນ ວ່າ, "ເວລາໄປສູ້ຮົບພວກ ມີດີອານ ນັ້ນ ເປັນ
ຫຍັງບໍ່ເອີ້ນເອົາພວກເຮົາແດ່? ເປັນຫຍັງຈຶ່ງເຮັດກັບພວກເຮົາແບບນີ້?" ພວກເຂົາພາກັນຕໍ່ວ່າຕໍ່
ຂານເລື່ອງນີ້ຢ່າງແຂງແຮງ. 2ແຕ່ ກີເດໂອນ ບອກພວກເຂົາວ່າ, "ໄຊຊະນະຂອງຂ້ອຍນັ້ນເມື່ອ
ປຽບທຽບກັບສິ່ງທີ່ເຈົ້າເຮັດກໍບໍ່ມີຫຍັງໝົດ ແມ່ນແຕ່ການເລັກນ້ອຍທີ່ຊາວ ເອຟຣາຢິມ ໄດ້ເຮັດ ກໍ
ມີຄຸນຄ່າກວ່າທຸກສິ່ງທີ່ຂ້ອຍໄດ້ເຮັດມາ. 3ພຣະເຈົ້າ ຊົງມອບ ໂອເຣັບ ແລະ ເຊເອບ ຜູ້ເປັນເຈົ້າ
ນາຍຂອງຊາວ ມີດີອານ ໄວ້ໃນກຳມືຂອງພວກເຈົ້າ ສິ່ງທີ່ຂ້ອຍເຮັດນັ້ນ ຈະປຽບທຽບກັບສິ່ງທີ່
ພວກເຈົ້າເຮັດໄດ້ຢ່າງໃດ" ເມື່ອເພິ່ນເວົ້າດັ່ງນັ້ນແລ້ວ ພວກເຂົາກໍເຊົາຄຽດ.

4ກີເດໂອນ ກັບສາມຮ້ອຍຄົນໄດ້ພາກັນໄປຮອດແມ່ນ້ຳຢໍແດນ ແລ້ວກໍຂ້າມແມ່ນ້ຳຢໍແດນໄປ
ພວກເຂົາມີຄວາມອິດເມື່ອຍອ່ອນແຮງລົງ ແຕ່ກໍຍັງຂັບໄລ່ພວກສັດຕູນັ້ນໜີໄປໄດ້. 5ກີເດໂອນ
ໄດ້ຮ້ອງຂໍຕໍ່ຊາວເມືອງ ສຸກໂກດ ວ່າ, "ຂ້ອຍຂໍເຂົ້າໃຫ້ຄົນຂອງຂ້ອຍກິນແດ່ ເພາະພວກເຂົາອິດ-
ເມື່ອຍຫລາຍ ຂ້ອຍກຳລັງໄລ່ຕິດຕາມ ເຊບາ ກັບ ຊັນມຸນນາ ເຈົ້າຊີວິດຂອງພວກ ມີດີອານ ຢູ່."
6ແຕ່ພວກຜູ້ນຳຂອງ ເມືອງ ສຸກໂກດ ເວົ້າວ່າ, "ເຫດໃດພວກຂ້ອຍຈຶ່ງຈະຕ້ອງເອົາອາຫານໃຫ້ທະ-
ຫານຂອງເຈົ້າກິນ ໃນເມື່ອເຈົ້າຍັງບໍ່ທັນຈັບ ເຊບາ ແລະ ຊັນມຸນນາ ໄດ້ເທື່ອ." 7ດັ່ງນັ້ນ ກີເດ-
ໂອນ ຈຶ່ງເວົ້າວ່າ, "ດີແລ້ວ ເມື່ອໃດ ພຣະຜູ້ເປັນເຈົ້າ ຊົງມອບ ເຊບາ ແລະ ຊັນມຸນນາ ໄວ້ໃນກຳມື
ຂອງຂ້ອຍ ຂ້ອຍຈະເອົາຫວາຍທີ່ຍັງມີໜາມ ແລະໄມ້ໜາມມາຂ້ຽນພວກເຈົ້າ." 8ຈາກນັ້ນ ກີເດ-
ໂອນ ກໍໄປຍັງເມືອງ ເປນູເອນ ແລ້ວຮ້ອງຂໍຕໍ່ຊາວເມືອງນັ້ນຢ່າງດຽວກັນ ຊາວເມືອງ ເປນູເອນ ກໍ
ຕອບຢ່າງດຽວກັນກັບຊາວ ເມືອງ ສຸກໂກດ. 9ກີເດໂອນ ຈຶ່ງເວົ້າຕໍ່ພວກເຂົາວ່າ "ເວລາຂ້ອຍກັບ
ຄືນມາຢ່າງປອດໄພແລ້ວ ຂ້ອຍຈະທຳລາຍຫໍຄອຍນີ້ລົງ."

10ຝ່າຍ ເຊບາ ແລະ ຊັນມຸນນາ ພ້ອມທັງກອງທັບໄດ້ຢູ່ທີ່ ກາໂກເຣ ກອງທັບຂອງເຜົ່າຕ່າງໆ
ທີ່ມາຈາກຖິ່ນ ແຫ້ງແລ້ງກັນດານ ຍັງເຫລືອຢູ່ແຕ່ສິບຫ້າພັນຄົນ ແລະມີຮ້ອຍຊາວພັນຄົນທີ່ຖືກຂ້າ
ຕາຍ. 11ກີເດໂອນ ໄດ້ໄປຕາມເສັ້ນທາງ ແຄມຖິ່ນ ແຫ້ງແລ້ງກັນດານ ຢູ່ທາງທິດຕາເວັນອອກ
ຂອງ ໂນບາ ແລະ ໂຢກເບຮາ ແລ້ວບຸກໂຈມຕີທະຫານເຫລົ່ານັ້ນທີ່ບໍ່ທັນຮູ້ຕົວ. 12ຝ່າຍເຈົ້າຊີວິດ
ທັງສອງຂອງຊາວ ມີດີອານ ຄື ເຊບາ ແລະ ຊັນມຸນນາ ກໍແລ່ນປົບໜີໄປ ແຕ່ ກີເດໂອນ ໄລ່ຕິດ-
ຕາມ ແລະຈັບທັງສອງຄົນມາໄດ້ ສ່ວນກອງທັບຂອງພວກເຂົາກໍຕື່ນຕົກໃຈ ແລະແຕກກະຈັດ-
ກະຈາຍໄປ.

13ແລ້ວ ກີເດໂອນ ລູກຊາຍຂອງ ໂຢອາດ ກໍກັບມາຈາກຮົບເສິກ ໄດ້ຜ່ານມາທາງ ເຮເຣັດ.
14ເພິ່ນໄດ້ຈັບເອົາຊາຍໜຸ່ມຜູ້ໜຶ່ງຈາກ ເມືອງ ສຸກໂກດ ແລະໄດ້ສອບຖາມເອົາເລື່ອງຕ່າງໆ ນຳ
ລາວ ຊາຍໜຸ່ມຜູ້ນັ້ນໄດ້ຈົດຊື່ພວກເຈົ້ານາຍ ແລະພວກເຖົ້າແກ່ເຈັດສິບຄົນຂອງເມືອງ ສຸກໂກດ
ໃຫ້ ກີເດໂອນ. 15ແລ້ວ ກີເດໂອນ ໄປຫາພວກ ສຸກໂກດ ແລະເວົ້າວ່າ, "ພວກເຈົ້າຈື່ເວລາທີ່ພວກ

ເຈົ້າດູໝິ່ນປະໝາດຂ້ອຍຫລືບໍ່? ພວກເຈົ້າໄດ້ເວົ້າວ່າພວກເຈົ້າບໍ່ສາມາດເອົາອາຫານ ໃຫ້ພວກ
ທະຫານທີ່ອ່ອນແຮງຂອງຂ້ອຍກິນ ເພາະວ່າຂ້ອຍຈັບເຊບາກ ແລະຊັນມູນນາບໍ່ທັນໄດ້ ແຕ່
ດຽວນີ້ພວກເຂົາຢູ່ນີ້ແລ້ວ. 16ກິເດໂອນຈຶ່ງເອົາຫວາຍທີ່ມີໜາມ ແລະໄມ້ໜາມຈາກຖິ່ນແຫ້ງແລ້ງ
ກັນດານມາລົງໂທດຜູ້ນຳເມືອງສຸກໂກດ. 17ແລ້ວທຳລາຍຫໍຄອຍທີ່ເປນູເອນ ແລະຂ້າຊາວ
ເມືອງນັ້ນຖິ້ມ.

18ແລ້ວເພິ່ນໄດ້ຖາມເຊບາ ແລະຊັນມູນນາວ່າ, “ຄົນທີ່ພວກເຈົ້າຂ້ານັ້ນມີຮູບຮ່າງຢ່າງໃດ?”
ພວກເຂົາໄດ້ຕອບວ່າ, “ຄືກັນກັບທ່ານ ພວກເຂົາທຸກໆ ຄົນຄືກັນກັບພະລາຊະກຸມມານ.” 19ກິ-
ເດໂອນຈຶ່ງເວົ້າວ່າ, “ພວກເຂົາເປັນອ້າຍນ້ອງລູກແມ່ດຽວກັບຂ້ອຍ ຂ້ອຍຂໍສາບານໃນນາມ
ພຣະຜູ້ເປັນເຈົ້າວ່າ ຖ້າພວກເຈົ້າບໍ່ໄດ້ຂ້າພວກເຂົາ ຂ້ອຍຈະບໍ່ຂ້າພວກເຈົ້າ.” 20ເພິ່ນຈຶ່ງບອກ
ເຢເທ ລູກຊາຍກົກຂອງເພິ່ນວ່າ, “ຈົ່ງໄປຂ້າພວກເຂົາເສຍ” ແຕ່ວ່າເດັກຊາຍນັ້ນບໍ່ກ້າຖອດດາບ
ອອກ ລາວຢ້ານ ເພາະວ່າລາວຍັງເປັນເດັກນ້ອຍຢູ່. 21ແຕ່ເຊບາ ແລະຊັນມູນນາເວົ້າວ່າ, “ຈົ່ງ
ມາຂ້າພວກເຮົາດ້ວຍຕົນເອງເທີ້ນ ເພາະວ່າທ່ານເອງເປັນຜູ້ຊາຍເຕັມຕົວຢູ່ແລ້ວ” ດັ່ງນັ້ນ ກິເດ-
ໂອນຈຶ່ງຂ້າເຊບາກັບຊັນມູນນາ ແລະເອົາຫລຽນຮູບເດືອນທີ່ເອ້ຄໍອູດໄປພ້ອມ.

22ຫລັງຈາກນັ້ນ ພວກອິສຣາເອນໄດ້ເວົ້າຕໍ່ກິເດໂອນວ່າ, “ຂໍທ່ານພ້ອມທັງລູກຊາຍ ແລະ
ຫລານຂອງທ່ານ ຈົ່ງເປັນຜູ້ຄຸ້ມຄອງພວກຂ້ານ້ອຍເທີ້ນ ເພາະວ່າ ທ່ານໄດ້ຊ່ອຍເຫລືອພວກຂ້າ-
ນ້ອຍໃຫ້ພົ້ນຈາກເງື້ອມມືຂອງພວກມີດີອານ.” 23ກິເດໂອນໄດ້ຕອບວ່າ, “ຂ້ອຍ ແລະລູກຊາຍ
ຂອງຂ້ອຍຈະບໍ່ເປັນຜູ້ຄຸ້ມຄອງຂອງພວກເຈົ້າ ແຕ່ວ່າ ແມ່ນພຣະຜູ້ເປັນເຈົ້າເປັນຜູ້ຄຸ້ມຄອງພວກ
ເຈົ້າ.” 24ກິເດໂອນເວົ້າຕໍ່ໄປອີກວ່າ, “ຂໍໃຫ້ຂ້ອຍຂໍສິ່ງໜຶ່ງຈາກພວກເຈົ້າ ຄືຈົ່ງເອົາຕຸ້ມຫູທີ່ພວກ
ເຈົ້າຍຶດມາໄດ້ນັ້ນໃຫ້ຂ້ອຍ” (ພວກມີດີອານຖືຕຸ້ມຫູຄຳ ເພາະວ່າພວກເຂົາເປັນຄົນທີ່ຢູ່ຕາມຖິ່ນ
ແຫ້ງແລ້ງກັນດານ). 25ພວກເຂົາຕອບວ່າ, “ພວກຂ້ານ້ອຍຍິນດີທີ່ຈະເອົາສິ່ງເຫລົ່ານີ້ໃຫ້ທ່ານ”
ແລ້ວພວກເຂົາກໍເອົາຜ້າມາປູລົງ ແລະເອົາຕຸ້ມຫູທີ່ຫ້ອນໂຮມໄດ້ມາວາງໄວ້ໃນຜ້ານັ້ນ. 26ຕຸ້ມຫູທີ່
ກິເດໂອນຂໍມານັ້ນໄດ້ພັນເຈັດຮ້ອຍບາດ ໂດຍບໍ່ໄດ້ໄລ່ສິ່ງອື່ນໆ ເຂົ້ານຳ ເຊັ່ນ ເຄື່ອງເອ້ ສ້ອຍ
ຄໍ ເຄື່ອງນຸ່ງສີມ່ວງທີ່ເຈົ້າ ຊີວິດມີດີອານນຸ່ງຖື ແລະເຄື່ອງຜູກເອ້ຄໍອູດດ້ວຍ. 27ແລ້ວກິເດໂອນ
ໄດ້ສ້າງຮູບພະດ້ວຍເຄື່ອງເຫລົ່ານີ້ ແລະເອົາໄວ້ໃນເມືອງຂອງເພິ່ນທີ່ຊື່ວ່າ ໂອຟຣາ ພວກອິ-
ສຣາເອນທຸກຄົນກໍພາກັນປະຖິ້ມພຣະເຈົ້າ ພວກເຂົາພາກັນນະມັດສະການຮູບພະນັ້ນທີ່ເມືອງ
ໂອຟຣາ ການເຮັດເຊັ່ນນີ້ເປັນບ້ວງແຮ້ວສຳລັບກິເດໂອນ ແລະຄອບຄົວ.

28ພວກມີດີອານໄດ້ຜ່າຍແພ້ພວກອິສຣາເອນ ໂດຍສູນເສຍທຸກຢ່າງ ໃນເວລາທີ່ກິເດໂອນ
ຍັງມີຊີວິດຢູ່ນັ້ນ ພື້ນແຜ່ນດິນກໍໄດ້ຮັບຄວາມສະຫງົບສຸກຕະຫລອດສີ່ສິບປີ.

## ກິເດໂອນເສຍຊີວິດ

29-31ຕໍ່ຈາກນັ້ນມາ ກິເດໂອນກັບຄືນເມືອຢູ່ເຮືອນຂອງຕົນເອງ ເພິ່ນມີລູກຊາຍເຈັດສິບຄົນ
ເພາະວ່າເພິ່ນມີເມຍຫລາຍຄົນ ເພິ່ນຍັງມີເມຍນ້ອຍອີກທີ່ເມືອງເຊເຄັມ ເມຍຜູ້ນີ້ມີລູກຊາຍຜູ້ໜຶ່ງ
ຊື່ ອາບີເມເລັກ. 32ກິເດໂອນລູກຊາຍຂອງໂຢອາດໄດ້ເສຍຊີວິດໄປໃນໄວເຖົ້າແກ່ ສ່ວນສົບ
ຂອງເພິ່ນໄດ້ຝັງໄວ້ໃນອຸບມຸງຂອງໂຢອາດພໍ່ຂອງເພິ່ນທີ່ເມືອງໂອຟຣາ ຊຶ່ງເປັນເມືອງຂອງຊາວ

ອາບີເອເຊ.
33ຫລັງຈາກ ກີເດໂອນ ໄດ້ເສຍຊີວິດແລ້ວ ພວກ ອິສຣາເອນ ກໍບໍ່ເຊື່ອຟັງ ພຣະເຈົ້າ ອີກ ພວກ
ເຂົາພາກັນນະມັດສະການ ບາອານ ແລະຖືເອົາ ບາອານ-ເບຣິດ ເປັນພະຂອງພວກເຂົາ. 34ພວກ
ເຂົາຫລົງລືມ ພຣະຜູ້ເປັນເຈົ້າ ຂອງພວກເຂົາ ຜູ້ຊົງຊ່ອຍຕົນໃຫ້ພົ້ນຈາກສັດຕູທີ່ຢູ່ອ້ອມຮອບນັ້ນ.
35ພວກເຂົາບໍ່ໄດ້ສະແດງຄວາມເມດຕາຕໍ່ຄອບຄົວ ກີເດໂອນ ທີ່ເຄີຍສ້າງຄຸນງາມຄວາມດີໄວ້ກັບ
ພວກ ອິສຣາເອນ.

# ບົດທີ 9

## ອາບີເມເລັກ

1ຢູ່ມາ ອາບີເມເລັກ ລູກຊາຍຂອງ ເຢຣຸບ-ບາອານ ໄດ້ໄປຫາພວກຍາດພີ່ນ້ອງຂອງແມ່ທີ່
ເມືອງ ເຊເຄັມ. 2ລາວໄດ້ບອກໃຫ້ພວກເຂົາ ໄປຖາມຊາວ ເມືອງ ເຊເຄັມ ວ່າ, “ພວກເຈົ້າຕ້ອງ-
ການຜູ້ໃດເປັນຜູ້ປົກຄອງພວກເຈົ້າ ຕ້ອງການລູກຊາຍທັງເຈັດສິບຄົນຂອງ ເຢຣຸບ-ບາອານ ຫລື
ວ່າຄົນດຽວ? ຈົ່ງເຂົ້າໃຈວ່າ ຂ້ອຍກໍເປັນເນື້ອໜັງແລະກ້ອນເລືອດຂອງພວກເຈົ້າ.” 3ແລ້ວພວກ
ພີ່ນ້ອງທາງແມ່ຂອງ ອາບີເມເລັກ ໄດ້ໄປເວົ້າເລື່ອງນີ້ຕໍ່ຊາວ ເຊເຄັມ ແທນລາວ ດັ່ງນັ້ນ ຊາວ ເຊ-
ເຄັມ ຈຶ່ງຕັດສິນໃຈຮັບເອົາ ອາບີເມເລັກ ເປັນຜູ້ປົກຄອງ ເພາະວ່າລາວເປັນເຊື້ອສາຍຂອງພວກ
ເຂົາ. 4ພວກເຂົາໄດ້ເອົາເງິນຈາກວິຫານແຫ່ງ ບາອານ-ເບຣິດ ເຈັດສິບຫລຽນໃຫ້ແກ່ອາບີເມເລັກ
ສ່ວນ ອາບີເມເລັກ ກໍເອົາເງິນນັ້ນ ຈ້າງພວກອັນຕະພານໄປນຳ. 5ລາວມຸ້ງໜ້າໄປເຮືອນພໍ່ຂອງ
ລາວທີ່ເມືອງ ໂອຟຣາ ແລະຂ້າລູກຊາຍເຈັດສິບຄົນຂອງ ເຢຣຸບ-ບາອານ ຢູ່ເທິງຫີນກ້ອນດຽວກັນ
ໂຢທາມ ລູກຊາຍຫລ້າຂອງ ເຢຣຸບ-ບາອານ ໄດ້ລີ້ຢູ່ ສະນັ້ນ ຈຶ່ງບໍ່ໄດ້ຖືກຂ້າ. 6ແລ້ວຊາວ ເຊ-
ເຄັມ ທຸກຄົນພ້ອມທັງຊາວ ເບັດ-ມິນໂລ ກໍພາກັນໄປທີ່ຕົ້ນໄມ້ໃຫຍ່ອັນສັກສິດທີ່ ເມືອງ ເຊເຄັມ
ເພື່ອແຕ່ງຕັ້ງ ອາບີເມເລັກ ເປັນເຈົ້າຊີວິດ.
7ເມື່ອ ໂຢທາມ ໄດ້ຍິນເລື່ອງນີ້ ລາວກໍໄປຢືນຢູ່ເທິງພູ ເກຣິຊິມ ແລະຮ້ອງໃສ່ພວກເຂົາດ້ວຍ
ສຽງດັງວ່າ, “ຊາວ ເຊເຄັມ ທັງຫລາຍ ຈົ່ງຟັງຂ້ອຍ ແລະ ພຣະເຈົ້າ ອາດຈະຟັງພວກເຈົ້າ.
8ຂ້ອຍຂໍເວົ້າປຽບທຽບວ່າ ຄັ້ງໜຶ່ງ ເມື່ອຕົ້ນໄມ້ທັງຫລາຍອອກໄປເລືອກເອົາເຈົ້າຊີວິດຂອງ
ພວກມັນ ພວກມັນໄດ້ເວົ້າກັບຕົ້ນໝາກກອກວ່າ ຈົ່ງມາເປັນເຈົ້າຊີວິດຂອງພວກຂ້ອຍເທີ້ນ. 9ຕົ້ນ
ໝາກກອກກໍຕອບວ່າ ຖ້າຂ້ອຍປົກຄອງພວກເຈົ້າ ຂ້ອຍຈະຕ້ອງເສຍນ້ຳມັນຂອງຂ້ອຍໃຊ້ຖວາຍ
ກຽດແກ່ພະທັງຫລາຍ ແລະແກ່ມະນຸດ.
10ຕົ້ນໄມ້ທັງຫລາຍຈຶ່ງເວົ້າຕໍ່ຕົ້ນໝາກເດື່ອວ່າ ຂໍໃຫ້ເຈົ້າມາເປັນເຈົ້າຊີວິດຂອງພວກຂ້ອຍເທີ້ນ.
11ແຕ່ຕົ້ນໝາກເດື່ອຕອບວ່າ ຖ້າຂ້ອຍປົກຄອງພວກເຈົ້າຂ້ອຍຈະຕ້ອງເສຍໝາກໄມ້ອັນຫອມ
ຫວານຂອງຂ້ອຍ.
12ດັ່ງນັ້ນ ຕົ້ນໄມ້ທັງຫລາຍຈຶ່ງເວົ້າຕໍ່ຕົ້ນອະງຸ່ນວ່າ ຂໍໃຫ້ເຈົ້າມາເປັນເຈົ້າຊີວິດຂອງຂ້ອຍເທີ້ນ.
13ແຕ່ຕົ້ນອະງຸ່ນຕອບວ່າ ຖ້າຂ້ອຍປົກຄອງພວກເຈົ້າ ຂ້ອຍຈະຕ້ອງເສຍເຫລົ້າອະງຸ່ນທີ່ເຮັດໃຫ້
ພະທັງຫລາຍ ແລະມວນມະນຸດມີຄວາມສຸກ.

14ແລ້ວຕົ້ນໄມ້ທຸກຕົ້ນໄດ້ເວົ້າຕໍ່ຕົ້ນໜາມວ່າ ຂໍໃຫ້ເຈົ້າມາເປັນເຈົ້າຊີວິດຂອງພວກເຮົາເທີ້ນ.
15ຕົ້ນໜາມໄດ້ຕອບວ່າ ຖ້າພວກເຈົ້າຕ້ອງການໃຫ້ຂ້ອຍເປັນເຈົ້າຊີວິດຂອງພວກເຈົ້າແທ້ ເຊີນມາ
ຊົ້ນຮົ່ມຂອງຂ້ອຍ ຖ້າວ່າ ພວກເຈົ້າບໍ່ມາ ໄຟຈະອອກມາຈາກຕົ້ນໜາມ ແລ້ວໄໝ້ຕົ້ນສົນທັງ-
ຫລາຍທີ່ຢູ່ເທິງພູເລບານອນນີ້."
16ໂຢທາມ ເວົ້າຕໍ່ໄປວ່າ, "ດຽວນີ້ພວກເຈົ້າໄດ້ແຕ່ງຕັ້ງ ອາບີເມເລັກ ເປັນເຈົ້າຊີວິດດ້ວຍຄວາມ
ຈິງໃຈບໍ? ພວກເຈົ້າຕອບສະໜອງຄວາມດີຂອງ ເຢຣຸບ-ບາອານ ແລະຄອບຄົວຂອງເພິ່ນແບບນີ້
ບໍ? 17ຈົ່ງຈື່ໄວ້ວ່າພໍ່ຂອງຂ້ອຍໄດ້ຕໍ່ສູ້ເພື່ອພວກເຈົ້າ ເພິ່ນໄດ້ສ່ຽງຊີວິດເພື່ອຊ່ອຍພວກເຈົ້າໃຫ້ພົ້ນ
ຈາກພວກ ມີດີອານ ແຕ່ມື້ນີ້ພວກເຈົ້າກັບມາຕໍ່ສູ້ຄອບຄົວພໍ່ຂອງຂ້ອຍ. 18ພວກເຈົ້າຂ້າລູກຊາຍ
ເຈັດສິບຄົນຂອງເພິ່ນຢູ່ເທິງຫີນກ້ອນດຽວ ແລະແຕ່ງຕັ້ງ ອາບີເມເລັກ ລູກທີ່ເກີດຈາກຍິງຮັບໃຊ້
ຂອງເພິ່ນ ເປັນເຈົ້າຊີວິດເມືອງ ເຊເຄັມ ເພາະວ່າລາວເປັນເຊື້ອສາຍຂອງພວກເຈົ້າ. 19ຖ້າວ່າສິ່ງ
ທີ່ພວກເຈົ້າເຮັດຕໍ່ ເຢຣຸບ-ບາອານ ເປັນຄວາມຈິງ ແລະສັດຊື່ແທ້ ຂໍໃຫ້ອາບີເມເລັກ ຈົ່ງມີ
ຄວາມສຸກຢູ່ກັບພວກເຈົ້າເທີ້ນ. 20ຖ້າບໍ່ເປັນຢ່າງນັ້ນ ຂໍໃຫ້ຄວາມໂກດຮ້າຍດັ່ງໄຟທີ່ມາຈາກ ອາ-
ບີເມເລັກ ທຳລາຍຊາວ ເຊເຄັມ ກັບຊາວ ເບັດ-ມິນໂລ ທຳລາຍ ອາບີເມເລັກ ເຊັ່ນດຽວກັນ ແລ້ວ
ໂຢທາມ ກໍປົບໜີໄປ. 21ລາວໄປອາໄສຢູ່ໃນເມືອງ ເບເອ ເພາະວ່າລາວຢ້ານ ອາບີເມເລັກ ອ້າຍ
ຂອງລາວ.

22ອາບີເມເລັກ ໄດ້ປົກຄອງພວກ ອິສຣາເອນ ເປັນເວລາສາມປີ. 23ພຣະເຈົ້າ ຊົງໃຫ້ມີຄວາມບໍ່
ເຂົ້າໃຈກັນລະຫວ່າງ ອາບີເມເລັກ ກັບຊາວເມືອງ ເຊເຄັມ ຊາວເມືອງ ເຊເຄັມ ກໍທໍລະຍົດຕໍ່ ອາບີ-
ເມເລັກ 24ເພື່ອຄວາມທາລຸນທີ່ພວກເຂົາໄດ້ເຮັດແກ່ລູກຊາຍເຈັດສິບຄົນຂອງ ກີເດໂອນ ຈະສະ-
ໜອງ ແລະເລືອດຂອງຄົນເຫລົ່ານັ້ນຈະໄດ້ຕົກແກ່ອາບີເມເລັກ ພີ່ນ້ອງຜູ້ໄດ້ປະຫານພວກເຂົາ
ແລະຕົກແກ່ຊາວເມືອງ ເຊເຄັມ ຜູ້ເສີມກຳລັງ ອາບີເມເລັກ ໃຫ້ຂ້າພີ່ນ້ອງຂອງຕົນ 25ຊາວເມືອງ
ເຊເຄັມ ໄດ້ວາງຄົນຊຸ້ມຢູ່ຄອຍຖ້າດັກຈັບ ອາບີເມເລັກ ທີ່ເທິງຍອດພູເຂົາ ພວກເຂົາກໍປຸ້ນຄົນທັງ
ປວງທີ່ຜ່ານໄປມາທາງນັ້ນ ແລະມີຄົນບອກ ອາບີເມເລັກ ໃຫ້ຮູ້.

26ຝ່າຍ ກາອານ ລູກຊາຍ ເອເບັດ ກັບຍາດພີ່ນ້ອງຂອງລາວເຂົ້າໄປໃນເມືອງ ເຊເຄັມ ຊາວ ເຊ-
ເຄັມ ເຊື່ອໃຈ ກາອານ 27ຈຶ່ງພາກັນອອກໄປໃນສວນອະງຸ່ນເກັບໝາກອະງຸ່ນມາຢຽບ ເຮັດງານ
ລ້ຽງໃນວັນພະຂອງພວກເຂົາ ພວກເຂົາກິນ ແລະດື່ມ ແລະດ່າສາບແຊ່ງ ອາບີເມເລັກ ດ້ວຍ
28ກາອານ ລູກຊາຍ ເອເບັດ ຈຶ່ງກ່າວວ່າ "ອາບີເມເລັກ ຄືໃຜ ແລະເຮົາຊາວ ເຊເຄັມ ເປັນໃຜຈຶ່ງ
ຕ້ອງມາຮັບໃຊ້ລາວ ລາວເປັນລູກຊາຍຂອງ ກີເດໂອນບໍ່ແມ່ນຫລື ແລະ ເຊບູນ ເປັນເຈົ້າໜ້າທີ່
ຂອງລາວບໍ່ແມ່ນຫລື ຈົ່ງຮັບໃຊ້ຄົນ ຮາໂມ ພໍ່ຂອງ ເຊເຄັມ ສາ ເຮົາຈະຮັບໃຊ້ ອາບີເມເລັກ ເຮັດ
ຫຍັງ 29ຖ້າຄົນເມືອງນີ້ຢູ່ໃຕ້ການປົກຄອງຂອງເຮົາ ເຮົາຈະຖອດ ອາບີເມເລັກອອກ" ພວກເຂົາ
ຈຶ່ງທ້າອາບີເມເລັກວ່າ "ຈົ່ງເພີ່ມເຕີມກອງທັບຂອງທ່ານຂຶ້ນແລ້ວອອກມາສາ."

30ເມື່ອ ເຊບູນ ເຈົ້າເມືອງໄດ້ຍິນຖ້ອຍຄຳຂອງ ກາອານ ລູກຊາຍ ເອເບັດ ກໍຄຽດ 31ຈຶ່ງສົ່ງຜູ້ສື່-
ສານໄປຍັງ ອາບີເມເລັກ ຢ່າງລັບໆກ່າວວ່າ "ເບິ່ງແມ ກາອານ ລູກຊາຍ ເອເບັດ ແລະຍາດພີ່-
ນ້ອງຂອງພວກເຂົາມາທີ່ເມືອງ ເຊເຄັມ ເບິ່ງແມ ພວກເຂົາຍຸແຫຍ່ເມືອງນັ້ນໃຫ້ຕໍ່ສູ້ກັບທ່ານ

[32]ບັດນີ້ ຂໍທ່ານຈົ່ງລຸກຂຶ້ນໃນເວລາກາງຄືນ ທັງທ່ານ ແລະຄົນທີ່ຢູ່ກັບທ່ານ ໄປຊຸ້ມຄອຍຖ້າຢູ່
ໃນທົ່ງນາ [33]ຮຸ່ງເຊົ້າເມື່ອຕາເວັນຂຶ້ນ ທ່ານຈົ່ງລຸກຂຶ້ນແຕ່ເຊົ້າໆ ຮີບບຸກເຂົ້າເມືອງ ແລະເບິ່ງແມ
ເມື່ອ ກາອານ ກັບກອງທັບອອກມາຕໍ່ສູ້ທ່ານ ທ່ານຈົ່ງເຮັດແກ່ພວກເຂົາຕາມແຕ່ໂອກາດຈະອຳ-
ນວຍ.”

[34]ຝ່າຍ ອາບີເມເລັກ ແລະກອງທັບທັງໝົດທີ່ຢູ່ກັບທ່ານກໍລຸກຂຶ້ນໃນເວລາກາງຄືນ ແບ່ງອອກ
ເປັນສີ່ກອງ ໄປຊຸ້ມຄອຍຖ້າສູ້ ເມືອງ ເຊເຄັມ [35]ກາອານ ລູກຊາຍ ເອເບັດ ກໍອອກໄປຢືນຢູ່ທີ່ທາງ
ເຂົ້າປະຕູເມືອງ ອາບີເມເລັກກໍລຸກຂຶ້ນພ້ອມກັບກອງທັບທີ່ຢູ່ກັບທ່ານ ອອກມາຈາກບ່ອນດັກຊຸ້ມ
[36]ແລະເມື່ອ ກາອານ ເຫັນກອງທັບ ຈຶ່ງເວົ້າກັບ ເຊບູນ ວ່າ “ເບິ່ງແມ ກອງທັບກຳລັງເຄື່ອນລົງມາ
ຈາກຍອດພູເຂົາ” ເຊບູນ ຕອບລາວວ່າ “ທ່ານເຫັນເງົາພູເຂົາເປັນຄົນໄປ” [37]ກາອານ ເວົ້າຂຶ້ນອີກ
ວ່າ “ເບິ່ງ ກອງທັບກຳລັງອອກມາຈາກກາງແຜ່ນດິນກອງໜຶ່ງ ແລະກອງທັບອີກກອງໜຶ່ງກຳລັງ
ອອກມາຈາກທາງທົ່ງພຽງ” [38]ເຊບູນ ກໍກ່າວແກ່ ກາອານ ວ່າ “ປາກຂອງທ່ານຢູ່ໃສດຽວນີ້ ທ່ານຜູ້
ທີ່ກ່າວວ່າ ‘ອາບີເມເລັກ ຄືຜູ້ໃດ ທີ່ເຮົາຕ້ອງຮັບໃຊ້’ ຄົນເຫລົ່ານີ້ເປັນຄົນທີ່ທ່ານໝິ່ນປະໝາດບໍ່
ແມ່ນຫລື ຈົ່ງຍົກທັບອອກໄປສູ້ຮົບກັບພວກເຂົາສາ” [39]ກາອານ ກໍຍ່າງນຳໜ້າກອງທັບ ເຊເຄັມ
ອອກໄປຕໍ່ສູ້ກັບ ອາບີເມເລັກ [40]ອາບີເມເລັກກໍຂັບໄລ່ ກາອານໜີໄປ ມີຄົນຖືກບາດເຈັບລົ້ມຕາຍ
ເປັນຈຳນວນຫລາຍ ຈົນຮອດທາງ ເຂົ້າປະຕູ ເມືອງ [41]ຝ່າຍ ອາບີເມເລັກ ກໍອາໄສຢູ່ທີ່ ອາຣູມາ
ແລະ ເຊບູນກໍຂັບໄລ່ ກາອານກັບຍາດພີ່ນ້ອງຂອງພວກເຂົາອອກໄປບໍ່ໃຫ້ຢູ່ທີ່ ເຊເຄັມຕໍ່ໄປ.

[42]ຕໍ່ມາຮຸ່ງເຊົ້າຂຶ້ນ ມີຊາວເມືອງອອກໄປທີ່ທົ່ງນາ ອາບີເມເລັກກໍຮູ້ເລື່ອງ [43]ເພິ່ນຈຶ່ງແບ່ງຄົນ
ຂອງຕົນອອກເປັນສາມກອງ ຊຸ້ມຄອຍຖ້າຢູ່ທີ່ທົ່ງນາ ເພິ່ນເຫັນຄົນອອກມາຈາກໃນເມືອງ ເພິ່ນ
ຈຶ່ງລຸກຂຶ້ນປະຫານພວກເຂົາ [44]ສ່ວນ ອາບີເມເລັກ ກັບທະຫານທີ່ຢູ່ນຳກໍລຸກໄປຢືນຢູ່ທີ່ທາງ ເຂົ້າ
ປະຕູເມືອງ ຝ່າຍທະຫານອີກສອງກອງກໍບຸກເຂົ້າໂຈມຕີຄົນທັງໝົດໃນທົ່ງນາ ແລະຂ້າພວກເຂົາ
[45]ອາບີເມເລັກ ໂຈມຕີເມືອງນັ້ນຕະຫລອດມື້ ຍຶດເມືອງນັ້ນໄດ້ ແລະຂ້າຟັນປະຊາຊົນທີ່ຢູ່ໃນ
ເມືອງນັ້ນ ທັງທຳລາຍເມືອງນັ້ນດ້ວຍ ແລ້ວກໍຫວ່ານເກືອລົງໃນດິນນັ້ນ.

[46]ເມື່ອບັນດາຊາວເຮືອນຫໍ ເຊເຄັມ ໄດ້ຍິນເຊັ່ນນັ້ນ ກໍໜີເຂົ້າໄປຢູ່ໃນປ້ອມໃນວັດຂອງ ພະບາ-
ອານ ເບຣິດ [47]ມີຄົນໄປບອກ ອາບີເມເລັກ ວ່າ ບັນດາຊາວ ເຮືອນຫໍ ເຊເຄັມ ໄປຊຸມນຸມກັນຢູ່
[48]ອາບີເມເລັກ ກໍຂຶ້ນໄປ ເທິງພູເຂົາ ຊານໂມນ ທັງ ເພິ່ນກັບບັນດາຄົນທີ່ຢູ່ນຳ ອາບີເມເລັກ ຖື
ຂວານຕັດກິ່ງໄມ້ໃສ່ບ່າແບກມາ ເພິ່ນຈຶ່ງບອກຄົນທີ່ຢູ່ນຳວ່າ “ເຈົ້າເຫັນຂ້ອຍເຮັດຫຍັງ ຈົ່ງຮີບໄປ
ເຮັດຢ່າງນັ້ນສາ” [49]ດັ່ງນັ້ນ ຄົນທັງປວງກໍຕັດກິ່ງໄມ້ແບກຕາມ ອາບີເມເລັກ ໄປສຸມໄວ້ ທີ່ປ້ອມ
ແລ້ວກໍຈຸດໄຟເຜົາປ້ອມນັ້ນ ຊາວເຮືອນຫໍ ເຊເຄັມ ກໍຕາຍໝົດ ທັງຊາຍ ແລະຍິງປະມານໜຶ່ງພັນ
ຄົນ.

## ອາບີເມເລັກຖືກທຳລາຍ

[50]ອາບີເມເລັກ ໄປຍັງ ເມືອງ ເທເບດ ຕັ້ງຄ້າຍຕິດກັບ ເມືອງ ເທເບດ ໄວ້ ແລະຍຶດ ເມືອງນັ້ນໄດ້
[51]ແຕ່ໃນ ເມືອງມີປ້ອມທີ່ ແຂງແຮງ ປະຊາຊົນ ເມືອງນັ້ນທັງໝົດກໍໜີເຂົ້າໄປຢູ່ໃນປ້ອມທັງຜູ້ຊາຍ
ແລະຜູ້ຍິງ ປິດປະຕູຂັງຕົນເອງໄວ້ ພວກເຂົາກໍຂຶ້ນໄປເທິງຫລັງຄາປ້ອມ [52]ອາບີເມເລັກ ຍົກທັບ

ມາຮອດປ້ອມນີ້ ໄດ້ຕໍ່ສູ້ກັນ ຈົນເຂົ້າມາໃກ້ປະຕູປ້ອມໄດ້ແລ້ວ ຈະເອົາໄຟເຜົາ [53]ມີຍິງຄົນໜຶ່ງ
ເອົາຫີນໂມ້ຖິ້ມລົງຖືກຫົວ ອາບີເມເລັກ ກະໂຫລກຫົວຂອງເພິ່ນແຕກ [54]ເພິ່ນຈຶ່ງຟ້າວຮ້ອງບອກ
ຄົນໜຸ່ມທີ່ຖືອາວຸດຂອງຕົນວ່າ “ເອົາດາບຟັນເຮົາເພື່ອຄົນຈະບໍ່ກ່າວວ່າ ‘ຜູ້ຍິງຄົນໜຶ່ງຂ້າເຮົາ
ຕາຍ” ຊາຍໜຸ່ມຂອງເພິ່ນຄົນນັ້ນກໍແທງເພິ່ນຊອດເຖິງແກ່ຄວາມຕາຍ [55]ເມື່ອຄົນ ອິສຣາເອນ
ເຫັນວ່າອາບີເມເລັກສິ້ນຊີວິດແລ້ວ ຕ່າງຄົນກໍກັບໄປຍັງບ່ອນຂອງຕົນ.
[56]ດັ່ງນີ້ແຫລະ ພຣະເຈົ້າຕອບສະໜອງຄວາມຊົ່ວທີ່ອາບີເມເລັກໄດ້ເຮັດຕໍ່ພໍ່ຂອງຕົນຄືໄດ້ຂ້າ
ພີ່ນ້ອງເຈັດສິບຄົນຂອງຕົນ [57]ແລະພຣະເຈົ້າເຮັດໃຫ້ບັນດາຄວາມຊົ່ວຮ້າຍຂອງຊາວ ເຊເຄັມກັບ
ຕົກຖືກຫົວຂອງພວກເຂົາທັງຫລາຍເອງ ຄຳສາບແຊ່ງຂອງ ໂຢທາມ ລູກຊາຍ ກິເດໂອນ ກໍຕົກຢູ່
ເທິງພວກເຂົາທັງຫລາຍ.

# ບົດທີ 10

## ໂຕລາກັບຢາອີເປັນຜູ້ປົກຄອງຂອງອິສຣາເອນ

[1]ຕໍ່ຈາກ ອາບີເມເລັກ ມີຄົນຂຶ້ນມາຊ່ວຍ ອິສຣາເອນ ໃຫ້ພົ້ນ ຊື່ ໂຕລາ ລູກຊາຍຂອງ ປູອາຜູ້
ເປັນລູກຊາຍຂອງ ໂດໂດ ຄົນອິດຊາຄາ ແລະລາວຢູ່ທີ່ເມືອງຊາມີ ໃນເຂດແດນພູເຂົາ ເອຟຣາ-
ຢິມ [2]ເພິ່ນປົກຄອງ ອິສຣາເອນ ຢູ່ຊາວສາມປີ ແລ້ວເພິ່ນກໍສິ້ນຊີວິດ ພວກເຂົາຝັງສົບເພິ່ນໄວ້ທີ່
ເມືອງຊາມີ.
[3]ຕໍ່ມາ ຢາອີ ຄົນ ກິເລອາດ ໄດ້ຂຶ້ນມາ ແລະເພິ່ນໄດ້ປົກຄອງ ອິສຣາເອນ ຢູ່ຊາວສອງປີ [4]ເພິ່ນ
ມີລູກຊາຍສາມສິບຄົນ ຂີ່ລູກລາສາມສິບໂຕ ແລະມີເມືອງຢູ່ສາມສິບຫົວເມືອງເອີ້ນວ່າ ເມືອງ
ຮາໂວດ-ຢາອີ ຈົນຮອດທຸກມື້ນີ້ ຊຶ່ງຢູ່ໃນແຜ່ນດິນ ກິເລອາດ [5]ຢາອີກໍສິ້ນຊີວິດ ແລະຖືກຝັງໄວ້ທີ່
ເມືອງ ກາໂມນ.

## ພຣະເຈົ້າຊົງພຣະພິໂລດຄົນທີ່ໄຫວ້ຮູບເຄົາລົບ

[6]ຄົນ ອິສຣາເອນກໍເຮັດຊົ່ວໃນສາຍພຣະເນດຂອງ ພຣະຜູ້ເປັນເຈົ້າອີກຄືໄປຮັບໃຊ້ພະບາອານ
ທັງຫລາຍແລະພວກພະອັດຊະໂຕເຣດ ພະຂອງຄົນຊີເຣຍ ພະຂອງເມືອງຊີໂດນ ພະຂອງຄົນ
ໂມອາບ ພະຂອງຄົນ ອຳໂມນ ພະຂອງຄົນ ຟີລິດສະຕິນ ແລະພວກເຂົາທັງຫລາຍປະຖິ້ມ
ພຣະຜູ້ເປັນເຈົ້າ ບໍ່ໄດ້ຮັບໃຊ້ພຣະອົງອີກ [7]ແລະພຣະພິໂລດຂອງ ພຣະຜູ້ເປັນເຈົ້າກໍຮ້ອນຂຶ້ນຕໍ່
ອິສຣາເອນ ຈຶ່ງຊົງຂາຍພວກເຂົາໄວ້ໃນມືຂອງຄົນ ຟີລິດສະຕິນ ແລະໃນມືຂອງຄົນ ອຳໂມນ
[8]ພວກເຂົາໄດ້ຂົ່ມເຫງ ແລະບີບບັງຄັບຄົນ ອິສຣາເອນ ໃນປີນັ້ນຄືຄົນ ອິສຣາເອນ ທັງປວງທີ່ຢູ່
ຟາກແມ່ນ້ຳຢໍແດນ ເບື້ອງນັ້ນໃນແຜ່ນດິນຂອງຄົນ ອະໂມຣິດ ຊຶ່ງຢູ່ໃນ ກິເລອາດສິບແປດປີ [9]ທັງ
ຄົນ ອຳໂມນ ໄດ້ຂ້າມແມ່ນ້ຳ ຢໍແດນ ໄປຕໍ່ສູ້ກັບ ຢູດາ ແລະຕໍ່ສູ້ກັບ ເບັນຢາມິນ ແລະຕໍ່ສູ້ກັບວົງ
ວານຂອງ ເອຟຣາຢິມ ດັ່ງນັ້ນ ອິສຣາເອນຈຶ່ງເດືອດຮ້ອນຫລາຍ.
[10]ແລະຄົນ ອິສຣາເອນ ຮ້ອງທຸກຕໍ່ ພຣະຜູ້ເປັນເຈົ້າ ວ່າ “ຂ້າພະອົງທັງຫລາຍ ໄດ້ເຮັດບາບຕໍ່
ພຣະອົງ ເພາະວ່າຂ້າພະອົງໄດ້ປະຖິ້ມ ພຣະເຈົ້າ ຂອງຂ້າພະອົງໄປ ແລະຮັບໃຊ້ບັນດາ ພະບາ-
ອານ” [11]ແລະ ພຣະຜູ້ເປັນເຈົ້າບອກກັບຄົນ ອິສຣາເອນວ່າ “ເຮົາບໍ່ໄດ້ຊ່ວຍເຈົ້າໃຫ້ພົ້ນຈາກຊາວ

ເອຢິບ ຈາກຄົນອະໂມຣິດ ຈາກຄົນອຳໂມນ ແລະຈາກຄົນຟີລິດສະຕິນຫລື 12ທັງຄົນຊີໂດນ
ຄົນອາມາເລັກ ແລະຊາວມາໂອນໄດ້ບີບບັງຄັບເຈົ້າ ເຈົ້າໄດ້ຮ້ອງທຸກເຖິງເຮົາ ແລະເຮົາໄດ້
ຊ່ວຍເຈົ້າໃຫ້ພົ້ນມືພວກເຂົາທັງຫລາຍ 13ເຖິງຢ່າງນັ້ນ ເຈົ້າທັງຫລາຍຍັງໄດ້ປະຖິ້ມເຮົາ ແລະຮັບ
ໃຊ້ພະອື່ນ ສະນັ້ນ ເຮົາຈຶ່ງຈະບໍ່ຊ່ວຍເຈົ້າທັງຫລາຍໃຫ້ພົ້ນອີກຕໍ່ໄປ 14ຈົ່ງໄປຮ້ອງທຸກຕໍ່ພະຊຶ່ງ
ເຈົ້າທັງຫລາຍໄດ້ເລືອກເອົາສາໃຫ້ພະເຫລົ່ານັ້ນຊ່ວຍເຈົ້າໃຫ້ພົ້ນໃນຍາມທຸກເດືອດຮ້ອນນີ້"
15ແລະຄົນອິສຣາເອນກາບທູນພຣະຜູ້ເປັນເຈົ້າວ່າ "ຂ້າພຣະອົງທັງຫລາຍໄດ້ເຮັດບາບແລ້ວ ຂໍ
ພຣະອົງເຮັດຕາມທີ່ພຣະອົງເຫັນດີ ຂ້າພະອົງຂໍອ້ອນວອນພຽງວ່າ ຂໍຊ່ວຍຂ້າພະອົງໃຫ້ພົ້ນໃນມື້-
ນີ້ເຖີດ" 16ດັ່ງນັ້ນ ພວກເຂົາທັງຫລາຍຈຶ່ງເຊົາຖືພະອື່ນ ແລະຮັບໃຊ້ພຣະຜູ້ເປັນເຈົ້າ ຝ່າຍ
ພຣະອົງຊົງຮ້ອນພຣະໄທດ້ວຍຄວາມທຸກຍາກຂອງອິສຣາເອນ.

17ຝ່າຍຄົນອຳໂມນກໍຖືກເອີ້ນໃຫ້ມາພ້ອມກັນ ພວກເຂົາໄດ້ຕັ້ງຄ້າຍໃນກິເລອາດ ແລະຄົນ
ອິສຣາເອນກໍມາພ້ອມກັນຕັ້ງຄ້າຍຢູ່ທີ່ມິດຊະປາ 18ແລະປະຊາຊົນກັບພວກຫົວໜ້າຂອງຄົນກິ-
ເລອາດເວົ້າກັນວ່າ "ຜູ້ໃດທີ່ຈະເປັນຄົນທຳອິດທີ່ຈະເຂົ້າຕໍ່ສູ້ກັບຄົນອຳໂມນ ຜູ້ນັ້ນຈະເປັນຫົວ-
ໜ້າຂອງຊາວກິເລອາດທັງໝົດ."

# ບົດທີ 11

## ເຢັບທາສູ້ຮົບກັບຄົນອຳໂມນ

1ເຢັບທາຄົນກິເລອາດເປັນທະຫານກ້າ ແຕ່ເປັນລູກຊາຍຂອງຍິງໂສເພນີ ກິເລອາດໃຫ້ກຳ-
ເນີດລູກຊື່ເຢັບທາ 2ເມຍແທ້ຂອງກິເລອາດເກີດລູກຊາຍຫລາຍຄົນ ແລະເມື່ອພວກລູກເຫລົ່າ-
ນັ້ນໃຫຍ່ຂຶ້ນແລ້ວ ຈຶ່ງຂັບໄລ່ເຢັບທາອອກໄປໂດຍກ່າວວ່າ "ເຈົ້າຈະມີສ່ວນໃນມໍລະດົກຂອງ
ຄອບຄົວພໍ່ເຮົາບໍ່ໄດ້ ເພາະວ່າເຈົ້າເປັນລູກຂອງຍິງຄົນອື່ນ" 3ເຢັບທາຈຶ່ງໜີຈາກພີ່ນ້ອງຂອງຕົນ
ໄປອາໄສຢູ່ທີ່ແຜ່ນດິນໂຕບ ພວກອັນຕະພານກໍລວມກັນກັບເຢັບທາ ແລະຕິດຕາມເພິ່ນໄປ.

4ຕໍ່ມາພາຍຫລັງຄົນອຳໂມນໄດ້ເຮັດສົງຄາມກັບຄົນອິສຣາເອນ 5ແລະເມື່ອຄົນອຳໂມນເຮັດ
ສົງຄາມກັບອິສຣາເອນນັ້ນພວກຜູ້ໃຫຍ່ຂອງເມືອງກິເລອາດໄດ້ໄປເພື່ອຈະພາເຢັບທາມາຈາກ
ແຜ່ນດິນໂຕບ 6ພວກເຂົາກ່າວແກ່ເຢັບທາວ່າ "ຈົ່ງມາເປັນຫົວໜ້າຂອງເຮົາ ເພື່ອເຮົາຈະໄດ້ຕໍ່ສູ້
ກັບຄົນອຳໂມນ" 7ແຕ່ເຢັບທາກ່າວແກ່ພວກຜູ້ໃຫຍ່ຂອງກິເລອາດວ່າ "ທ່ານບໍ່ໄດ້ກຽດຊັງຂ້າ-
ພະເຈົ້າ ແລະຂັບໄລ່ຂ້າພະເຈົ້າໄປຈາກຄອບຄົວພໍ່ຂອງຂ້າພະເຈົ້າຫລື ເມື່ອຄາວທຸກຍາກທ່ານ
ຈະມາຫາຂ້າພະເຈົ້າເຮັດຫຍັງ" 8ພວກຜູ້ໃຫຍ່ຂອງກິເລອາດຈຶ່ງກ່າວແກ່ເຢັບທາວ່າ "ເຫດທີ່
ເຮົາກັບມາຫາທ່ານໃນບັດນີ້ ເພາະຕ້ອງການໃຫ້ທ່ານໄປກັບເຮົາ ສູ້ຮົບກັບຄົນອຳໂມນ ແລ້ວມາ
ເປັນຫົວໜ້າຂອງເຮົາທີ່ຈະປົກຄອງຊາວກິເລອາດທັງປວງ" 9ເຢັບທາຈຶ່ງກ່າວແກ່ພວກຜູ້ໃຫຍ່
ຂອງກິເລອາດວ່າ "ຖ້າທ່ານໃຫ້ຂ້າພະເຈົ້າກັບເຮືອນເພື່ອເຮັດເສິກກັບຄົນອຳໂມນ ແລະຖ້າ
ພຣະຜູ້ເປັນເຈົ້າໄດ້ມອບພວກເຂົາໄວ້ຕໍ່ໜ້າຂ້າພະເຈົ້າ ຂ້າພະເຈົ້າຈະໄດ້ເປັນຫົວໜ້າຂອງທ່ານ
ຫລືບໍ່" 10ພວກຜູ້ໃຫຍ່ຂອງກິເລອາດຈຶ່ງຕອບເຢັບທາວ່າ "ພຣະຜູ້ເປັນເຈົ້າເປັນພະຍານລະ-
ຫວ່າງເຮົາ ເຮົາຈະເຮັດຕາມທີ່ທ່ານສັ່ງທຸກປະການ" 11ເຢັບທາຈຶ່ງໄປກັບພວກຜູ້ໃຫຍ່ຂອງກິເລ-

ອາດ ແລະປະຊາຊົນກໍຕັ້ງເພິ່ນໃຫ້ເປັນຫົວໜ້າ ແລະເຈົ້ານາຍຂອງພວກເຂົາ ແລ້ວເຢັບທາກໍ
ກ່າວຄຳຕົກລົງກັນທັງໝົດຕໍ່ພຣະພັກພຣະຜູ້ເປັນເຈົ້າທີ່ເມືອງມິດຊະປາ.
[12]ເຢັບທາຈຶ່ງສົ່ງຜູ້ສື່ສານໄປຍັງກະສັດອຳໂມນຖາມວ່າ "ທ່ານມີເລື່ອງອັນໃດກັບຂ້າພະເຈົ້າ
ທ່ານຈຶ່ງຍົກທັບມາຕໍ່ສູ້ກັບແຜ່ນດິນຂອງຂ້າພະເຈົ້າ" [13]ກະສັດຄົນອຳໂມນຕອບຜູ້ສື່ສານຂອງ
ເຢັບທາວ່າ "ເພາະວ່າເມື່ອອິສຣາເອນຍົກທັບອອກມາຈາກເອຢິບໄດ້ຍຶດແຜ່ນດິນຂອງເຮົາໄປ
ຕັ້ງແຕ່ແມ່ນ້ຳອາໂນນເຖິງແມ່ນ້ຳຢັບໂບກ ແລະຮອດແມ່ນ້ຳຢໍແດນ ບັດນີ້ ຂໍຄືນແຜ່ນດິນ
ເຫລົ່ານັ້ນໂດຍດີ."
[14]ແລະເຢັບທາກໍສົ່ງຜູ້ສື່ສານໄປຫາກະສັດຄົນອຳໂມນອີກ [15]ໃຫ້ກ່າວວ່າ "ເຢັບທາກ່າວດັ່ງ-
ນີ້ວ່າ ອິສຣາເອນບໍ່ໄດ້ຍຶດແຜ່ນດິນຂອງໂມອາບ ຫລືແຜ່ນດິນຂອງຄົນອຳໂມນ [16]ແຕ່ເມື່ອອິ-
ສຣາເອນອອກຈາກເອຢິບ ພວກເຂົາໄດ້ຍ່າງໄປທາງຖິ່ນແຫ້ງແລ້ງກັນດານຮອດທະເລແດງ
ແລະມາຮອດກາເດັດ [17]ອິສຣາເອນຈຶ່ງສົ່ງຜູ້ສື່ສານໄປຫາກະສັດເອໂດມກ່າວວ່າ 'ຂ້າພະເຈົ້າ
ຂໍອະນຸຍາດຍົກທັບຜ່ານແຜ່ນດິນຂອງທ່ານໄປ' ແຕ່ກະສັດເອໂດມບໍ່ຟັງ ແລະໄດ້ສົ່ງຄຳຂໍຄືກັນ
ໄປຫາກະສັດເມືອງໂມອາບດ້ວຍ ແຕ່ເພິ່ນກໍບໍ່ຕົກລົງ ດັ່ງນັ້ນອິສຣາເອນຈຶ່ງຢຸດຢູ່ທີ່ກາເດັດ
[18]ແລ້ວພວກເຂົາກໍເດີນທາງໄປໃນຖິ່ນແຫ້ງແລ້ງກັນດານອ້ອມແຜ່ນດິນເອໂດມ ແລະແຜ່ນດິນ
ໂມອາບ ແລະມາທາງທິດຕາເວັນອອກຂອງແຜ່ນດິນໂມອາບ ແລະຕັ້ງຄ້າຍຢູ່ທີ່ຟາກແມ່ນ້ຳ
ອາໂນນເບື້ອງນັ້ນ ແຕ່ພວກເຂົາບໍ່ໄດ້ເຂົ້າໄປໃນເຂດແດນຂອງໂມອາບ ເພາະວ່າແມ່ນ້ຳອາ-
ໂນນເປັນເຂດແດນຂອງໂມອາບ [19]ອິສຣາເອນຈຶ່ງສົ່ງຜູ້ສື່ສານໄປຫາສີໂຮນກະສັດຄົນອະໂມ-
ຣິດ ກະສັດນະຄອນເຮັດຊະໂບນ ອິສຣາເອນຮຽນເພິ່ນວ່າ 'ຂໍໃຫ້ພວກຂ້າພະເຈົ້າຍົກທັບຜ່ານ
ແຜ່ນດິນຂອງທ່ານໄປສະຖານທີ່ຂອງຂ້າພະເຈົ້າ' [20]ແຕ່ສີໂຮນບໍ່ວາງໃຈທີ່ຈະໃຫ້ອິສຣາເອນຍົກ
ທັບຜ່ານເຂດແດນຂອງຕົນ ສະນັ້ນ ສີໂຮນຈຶ່ງໄດ້ຮວບຮວມປະຊາຊົນທັງໝົດຂອງຕົນ ຕັ້ງຄ້າຍ
ຢູ່ທີ່ຢາຮາດ ແລະສູ້ຮົບກັບອິສຣາເອນ [21]ແລະພຣະຜູ້ເປັນເຈົ້າພຣະເຈົ້າຂອງອິສຣາເອນໄດ້
ມອບສີໂຮນ ແລະປະຊາຊົນທັງໝົດຂອງເພິ່ນໄວ້ໃນມືອິສຣາເອນ ຄົນອິສຣາເອນກໍໂຈມຕີ
ພວກເຂົາ ຈຶ່ງຍຶດຄອງແຜ່ນດິນທັງໝົດຂອງຄົນອະໂມຣິດຜູ້ຊຶ່ງເປັນຊາວເມືອງນັ້ນ [22]ແລະພວກ
ເຂົາຍຶດເຂດແດນທັງໝົດຂອງຄົນອະໂມຣິດຕັ້ງແຕ່ແມ່ນ້ຳອາໂນນຮອດແມ່ນ້ຳຢັບໂບກ ແລະ
ຕັ້ງແຕ່ຖິ່ນແຫ້ງແລ້ງກັນດານຮອດແມ່ນ້ຳຢໍແດນ [23]ດັ່ງນັ້ນ ພຣະຜູ້ເປັນເຈົ້າພຣະເຈົ້າຂອງອິ-
ສຣາເອນຈຶ່ງຂັບໄລ່ຄົນອະໂມຣິດອອກຕໍ່ໜ້າອິສຣາເອນປະຊາຊົນຂອງພຣະອົງ ຝ່າຍທ່ານຈະ
ມາຖືເອົາເປັນກຳມະສິດເຊັ່ນນັ້ນຫລື [24]ທ່ານບໍ່ໄດ້ຖືກຳມະສິດໃນສິ່ງຊຶ່ງພະເຄໂມດພະຂອງທ່ານ
ມອບໃຫ້ທ່ານຍຶດຄອງຫລື ພຣະຜູ້ເປັນເຈົ້າພຣະເຈົ້າຂອງເຮົາຂັບໄລ່ຜູ້ໃດໄປໃຫ້ພົ້ນໜ້າເຮົາ
ເຮົາກໍຍຶດຄອງບ່ອນຂອງຜູ້ນັ້ນ [25]ຝ່າຍທ່ານຈະດີກວ່າບາລາກລູກຊາຍຊິບໂປກະສັດເມືອງໂມ-
ອາບຫລື ທ່ານເຄີຍແຂ່ງຂັນກັບອິສຣາເອນຫລື ທ່ານເຄີຍຕໍ່ສູ້ກັບພວກເຂົາທັງຫລາຍຫລື
[26]ເມື່ອອິສຣາເອນອາໄສຢູ່ໃນກຸງເຮັດຊະໂບນ ແລະຊົນນະບົດຂອງກຸງນັ້ນ ແລະໃນເມືອງອາ-
ໂຣເອ ແລະຊົນນະບົດຂອງເມືອງນັ້ນ ແລະຢູ່ໃນບັນດາຫົວເມືອງທີ່ຕັ້ງຢູ່ຕາມຝັ່ງແມ່ນ້ຳອາໂນນ
ຮອດສາມຮ້ອຍປີ ເປັນຫຍັງທ່ານບໍ່ເອີ້ນຄືນມາພາຍໃນເວລານັ້ນ [27]ຂ້າພະເຈົ້າຈຶ່ງບໍ່ໄດ້ເຮັດ

ຄວາມຜິດຕໍ່ທ່ານ ແຕ່ທ່ານໄດ້ເຮັດຄວາມຜິດຕໍ່ຂ້າພະເຈົ້າໃນການເຮັດສົງຄາມ ກັບຂ້າພະເຈົ້າ
ຂໍ ພຣະຜູ້ເປັນເຈົ້າ ຈອມຜູ້ພິພາກສາ ເປັນຜູ້ພິພາກສາລະຫວ່າງຄົນ ອິສຣາເອນ ແລະຄົນ ອຳໂມນ
ໃນມື້ນີ້” 28ແຕ່ກະສັດຂອງຄົນ ອຳໂມນບໍ່ໄດ້ຟັງຄຳຂອງ ເຢັບທາ ຊຶ່ງເພິ່ນສົ່ງໄປໃຫ້.

29ພຣະວິນຍານ ຂອງ ພຣະຜູ້ເປັນເຈົ້າ ກໍມາສະຖິດຢູ່ກັບ ເຢັບທາ ເພິ່ນ ຈຶ່ງ ຍົກທັບຜ່ານ ກີເລ-
ອາດ ແລະ ມານາເຊ ແລະຜ່ານມິຊະປາແຫ່ງ ກີເລອາດ ແລະຈາກມິຊະປາແຫ່ງ ກີເລອາດ ເພິ່ນ
ຍົກທັບຜ່ານຕໍ່ໄປຮອດບ່ອນຄົນ ອຳໂມນ.

## ຄຳປະຕິຍານອັນບໍ່ມີປັນຍາຂອງເຢັບທາ

30ແລະ ເຢັບທາ ປະຕິຍານຕໍ່ ພຣະຜູ້ເປັນເຈົ້າ ວ່າ “ຖ້າພຣະອົງມອບຄົນ ອຳໂມນ ໄວ້ໃນມືຂອງ
ຂ້າພຣະອົງ ແລ້ວ 31ຜູ້ໃດທີ່ອອກມາຈາກປະຕູເຮືອນຂອງຂ້າພຣະອົງ ເພື່ອຕ້ອນຮັບຂ້າພຣະອົງ
ເມື່ອຂ້າພຣະອົງກັບມາຈາກຄົນ ອຳໂມນ ດ້ວຍຄວາມສະຫງົບ ຜູ້ນັ້ນຈະຕ້ອງ ເປັນຂອງ ພຣະຜູ້-
ເປັນເຈົ້າ ແລະຂ້າພຣະອົງຈະຖວາຍຜູ້ນັ້ນເປັນເຄື່ອງເຜົາບູຊາ” 32ແລ້ວ ເຢັບທາ ຈຶ່ງຍົກທັບຂ້າມ
ໄປສູ້ຮົບກັບຄົນ ອຳໂມນ ແລະ ພຣະຜູ້ເປັນເຈົ້າ ມອບພວກເຂົາໄວ້ໃນມືຂອງເພິ່ນ 33ແລະເພິ່ນໄດ້
ປະຫານ ພວກ ເຂົາ ຈາກ ອາໂຣເອ ຈົນຮອດບ່ອນທີ່ຢູ່ໃກ້ໆ ເມືອງ ມິນນິດ ລວມຊາວຫົວ ເມືອງ
ແລະໄກໄປຈົນຮອດທົ່ງພຽງແຫ່ງສວນອະງຸ່ນ ຜູ້ຄົນລົ້ມຕາຍຫລາຍ ຄົນ ອຳໂມນ ຈຶ່ງພ່າຍແພ້ຕໍ່-
ໜ້າຄົນ ອິສຣາເອນ.

34ແລ້ວ ເຢັບທາ ກໍກັບມາເຮືອນທີ່ ມິດຊະປາ ເບິ່ງແມ ລູກສາວຂອງເພິ່ນຖືກອງເຕັ້ນລຳອອກ
ມາຕ້ອນຮັບເພິ່ນ ນາງເປັນລູກຄົນດຽວ ນອກຈາກລູກສາວຄົນນີ້ເພິ່ນບໍ່ມີລູກຊາຍ ແລະລູກສາວ
ອີກເລີຍ 35ແລະຕໍ່ມາເມື່ອເພິ່ນເຫັນນາງແລ້ວ ເພິ່ນກໍຈີກເສື້ອຜ້າຂອງຕົນ ກ່າວວ່າ “ໂອຍ ລູກ
ສາວເອີ່ຍ ເຈົ້າເຮັດໃຫ້ພໍ່ທຸກໃຈແລ້ວ ເພາະວ່າເຈົ້າເປັນເຫດໃຫ້ພໍ່ເດືອດຮ້ອນຫລາຍຂຶ້ນ ເພາະ-
ວ່າພໍ່ໄດ້ອ້າປາກປະຕິຍານຕໍ່ ພຣະຜູ້ເປັນເຈົ້າ ໄວ້ ຈະຄືນຄຳກໍບໍ່ໄດ້” 36ນາງຈຶ່ງເວົ້າກັບພໍ່ວ່າ “ພໍ່
ເອີຍ ເມື່ອພໍ່ອອກປາກສັນຍາກັບ ພຣະຜູ້ເປັນເຈົ້າ ໄວ້ຢ່າງໃດ ຂໍພໍ່ເຮັດກັບລູກຕາມຄຳທີ່ອອກ
ຈາກ ປາກ ຂອງ ພໍ່ ສາ ເພາະວ່າ ພຣະຜູ້ເປັນເຈົ້າ ໄດ້ ແກ້ແຄ້ນ ຄົນ ອຳໂມນ ສັດຕູ ເພື່ອ ພໍ່ ແລ້ວ”
37ແລະນາງເວົ້າກັບພໍ່ຂອງນາງວ່າ “ຂໍໃຫ້ລູກຢູ່ຢ່າງນີ້ເຖີດ ຂໍປ່ອຍລູກໄວ້ຈັກສອງເດືອນລູກຈະ
ໄດ້ຈາກເຮືອນ ແລະລົງໄປເທິງພູເຂົາ ຮ້ອງໄຫ້ຄໍ່າຄວນເຖິງຄວາມເປັນພົມມະຈາລີຂອງລູກ ລູກ
ກັບເພື່ອນໆຂອງລູກ” 38ເພິ່ນຈຶ່ງຕອບວ່າ “ໄປສາ” ແລະເພິ່ນກໍປ່ອຍນາງໄປສອງເດືອນ ນາງກໍ
ອອກໄປ ນາງ ແລະພວກໝູ່ຂອງນາງແລ້ວກໍພາກັນຮ້ອງໄຫ້ຄໍ່າຄວນເຖິງຄວາມເປັນພົມມະຈາລີ
ຂອງນາງເທິງພູເຂົາ 39ຢູ່ມາເມື່ອຄົບສອງເດືອນແລ້ວ ນາງກໍກັບມາຫາພໍ່ຂອງນາງ ແລະເພິ່ນກໍ
ເຮັດກັບນາງຕາມຄຳປະຕິຍານທີ່ໄດ້ປະຕິຍານໄວ້ ນາງຍັງບໍ່ເຄີຍສົມສູ່ກັບຊາຍໃດເລີຍ ແລະ
ເປັນທຳນຽມໃນ ອິສຣາເອນ 40ຄືລູກສາວຊາວ ອິສຣາເອນ ຈະໄປຮ້ອງໄຫ້ໄວ້ທຸກໃຫ້ລູກສາວຂອງ
ເຢັບທາ ຄົນ ກີເລອາດ ປີລະສີ່ມື້.

# ບົດທີ 12

## ເຢັບທາຊະນະຄົນເອຟຣາຢິມ

[1]ຝ່າຍຄົນ ເອຟຣາຢິມ ມາພ້ອມກັນຂ້າມໄປທາງເໜືອ ເວົ້າກັບ ເຢັບທາ ວ່າ "ເຫດໃດທ່ານຈຶ່ງ
ຍົກທັບຂ້າມໄປຮົບຄົນ ອຳໂມນ ແຕ່ບໍ່ຊວນເຮົາໄປນຳ ເຮົາຈະຈູດໄຟເຜົາເຮືອນທ່ານທັບຕົວ
ທ່ານ" [2]ເຢັບທາ ຈຶ່ງຕອບພວກເຂົາວ່າ "ຂ້າພະເຈົ້າກັບປະຊາຊົນຕິດຕາມເຮັດເສິກໃຫຍ່ກັບຄົນ
ອຳໂມນ ເມື່ອຂ້າພະເຈົ້າເອີ້ນທ່ານໃຫ້ຊ່ວຍ ທ່ານບໍ່ໄດ້ຊ່ວຍເຮົາໃຫ້ພົ້ນມືພວກເຂົາ [3]ເມື່ອຂ້າພະ-
ເຈົ້າເຫັນວ່າທ່ານບໍ່ຊ່ວຍຂ້າພະເຈົ້າແລ້ວຂ້າພະເຈົ້າກໍສ່ຽງຊີວິດຂອງຂ້າພະເຈົ້າຂ້າມໄປຮົບກັບຄົນ
ອຳໂມນ ແລະ ພຣະຜູ້ເປັນເຈົ້າ ມອບພວກເຂົາໄວ້ໃນມືຂອງຂ້າພະເຈົ້າ ມື້ນີ້ທ່ານຈະຂຶ້ນມາເຮັດ
ເສິກກັບຂ້າພະເຈົ້າດ້ວຍເຫດອັນໃດ" [4]ເຢັບທາ ຈຶ່ງຮວບຮວມບັນດາຊາວ ກີເລອາດ ສູ້ຮົບກັບຄົນ
ເອຟຣາຢິມ ຄົນ ກີເລອາດ ກໍປະຫານຄົນ ເອຟຣາຢິມ ເພາະວ່າພວກເຂົາກ່າວວ່າ "ເຈົ້າຊາວ ກີ-
ເລອາດ ເຈົ້າ ເປັນຄົນຫລົບໜີຂອງຊາວ ເອຟຣາຢິມ ທ່າມກາງຄົນ ເອຟຣາຢິມ ແລະ ມານາເຊ"
[5]ຊາວ ກີເລອາດ ກໍເຂົ້າຍຶດທ່າຂ້າມແມ່ນ້ຳຢໍແດນ ໄວ້ ບໍ່ໃຫ້ຄົນ ເອຟຣາຢິມ ຂ້າມ ເມື່ອຄົນ ເອ-
ຟຣາຢິມ ທີ່ຫລົບໜີຄົນໃດມາບອກວ່າ "ຂໍໃຫ້ຂ້າມໄປແດ່" ຄົນ ກີເລອາດ ຈະຖາມພວກເຂົາວ່າ
"ເຈົ້າເປັນຄົນ ເອຟຣາຢິມ ຫລື?" ເມື່ອພວກເຂົາຕອບວ່າ "ບໍ່ແມ່ນ" [6]ພວກເຂົາຈະບອກວ່າ "ຈົ່ງ
ກ່າວຄຳວ່າຊິບໂບເລັດ" ຄົນນັ້ນຈະເວົ້າວ່າ "ສິບໂບເລັດ" ເພາະວ່າຄົນ ເອຟຣາຢິມ ອອກສຽງຄຳ
ນີ້ບໍ່ແຈ້ງ ພວກເຂົາຈຶ່ງຈັບຄົນນັ້ນ ແລະຂ້າຢູ່ທ່າຂ້າມແມ່ນ້ຳຢໍແດນ ຄາວນັ້ນມີຄົນ ເອຟຣາຢິມ
ຕາຍສີ່ໝື່ນສອງພັນຄົນ [7]ເຢັບທາ ປົກຄອງ ອິສຣາເອນ ຢູ່ຫົກປີແລ້ວ ເຢັບທາ ຊາວ ກີເລອາດ ກໍສິ້ນ
ຊີວິດ ແລະຖືກຝັງໄວ້ຢູ່ຫົວເມືອງໜຶ່ງໃນ ກີເລອາດ.

## ຜູ້ປົກຄອງອິບຊານ ເອໂລນ ແລະອັບໂດນ

[8]ຕໍ່ຈາກ ເຢັບທາ ມາຄື ອິບຊານ ແຫ່ງ ເບັດເລເຮັມ ໄດ້ປົກຄອງ ອິສຣາເອນ [9]ເພິ່ນມີລູກຊາຍ
ສາມສິບຄົນ ແລະລູກສາວສາມສິບຄົນ ເພິ່ນໃຫ້ແຕ່ງງານກັບຄົນນອກຕະກູນຂອງຕົນ ແລະນຳ
ລູກສາວສາມສິບຄົນຂອງຄົນນອກຕະກູນມາໃຫ້ແກ່ລູກຊາຍຂອງຕົນ ເພິ່ນປົກຄອງ ອິສຣາເອນ
ຢູ່ເຈັດປີ [10]ແລ້ວ ອິບຊານ ກໍສິ້ນຊີວິດຖືກຝັງໄວ້ທີ່ ເບັດເລເຮັມ.

[11]ຕໍ່ມາ ເອໂລນ ຄົນ ເຊບູລູນ ປົກຄອງ ອິສຣາເອນ ແລະ ເພິ່ນປົກຄອງ ອິສຣາເອນ ສິບປີ
[12]ແລ້ວ ເອໂລນ ຄົນ ເຊບູລູນ ກໍສິ້ນຊີວິດ ແລະຖືກຝັງໄວ້ທີ່ ອາຢາໂລນ ໃນເຂດແດນຂອງຄົນ ເຊບູ-
ລູນ.

[13]ຕໍ່ມາ ອັບໂດນ ລູກຊາຍ ຮິນເລນ ຊາວ ປີຣາໂທນ ປົກຄອງ ອິສຣາເອນ [14]ເພິ່ນມີລູກຊາຍສີ່
ສິບຄົນ ແລະຫລານຊາຍສາມສິບຄົນ ຂີ່ລາເຈັດສິບໂຕ ເພິ່ນປົກຄອງ ອິສຣາເອນ ຢູ່ແປດປີ
[15]ແລ້ວ ອັບໂດນ ລູກຊາຍ ຮິນເລນ ຊາວ ປີຣາໂທນ ກໍສິ້ນຊີວິດຖືກຝັງໄວ້ຢູ່ ປີຣາໂທນ ໃນເຂດແດນ
ຂອງ ເອຟຣາຢິມ ຢູ່ພູເຂົາຂອງຄົນ ອາມາເລັກ.

# ບົດທີ 13

## ແຊມຊັນເກີດ

1ພວກ ອິສຣາເອນ ໄດ້ເຮັດບາບຕໍ່ສູ້ ພຣະຜູ້ເປັນເຈົ້າ ອີກ ພຣະອົງຈຶ່ງຊົງໃຫ້ພວກເຂົາຢູ່ໃຕ້ອຳ-
ນາດຂອງພວກ ຟີລິດສະຕິນ ເປັນເວລາສີ່ສິບປີ.

2ມີຊາຍຄົນໜຶ່ງຊື່ ມາໂນອາ ລາວມາຈາກເມືອງ ໂຊຣາ ເປັນຄົນຢູ່ໃນຕະກູນ ດານ ສ່ວນເມຍ
ຂອງລາວນັ້ນເປັນຄົນບໍ່ມີລູກ. 3ທູດຂອງ ພຣະຜູ້ເປັນເຈົ້າ ຈຶ່ງປະກົດຕໍ່ນາງ ແລະເວົ້າວ່າ, “ເຈົ້າ
ເປັນຄົນບໍ່ມີລູກ ແຕ່ວ່າດຽວນີ້ເຈົ້າຈະຖືພາ ຈະໄດ້ລູກຜູ້ຊາຍ. 4ຈົ່ງລະວັງຢ່າດື່ມນໍ້າອະງຸ່ນ ຫລື
ເຫລົ້າ ແລະຢ່າກິນອາຫານທີ່ຫວງຫ້າມ. 5ເພາະວ່າເຈົ້າຈະຖືພາ ແລະຈະໄດ້ລູກຜູ້ຊາຍ ນັບແຕ່
ມື້ລູກຊາຍເຈົ້າເກີດມາ ລາວຈະເປັນຄົນ ນາຊີຣີ ທີ່ອຸທິດຕົວແດ່ ພຣະເຈົ້າ ສະນັ້ນ ເຈົ້າຢ່າຕັດຜົມ
ໃຫ້ລາວຈັກເທື່ອ ລາວຈະເປັນຜູ້ຊ່ອຍພວກ ອິສຣາເອນ ໃຫ້ພົ້ນຈາກເງື້ອມມືຂອງພວກ ຟີລິດສະ-
ຕິນ.”

6ຄັນແລ້ວ ຍິງຄົນນັ້ນກໍໄປບອກຜົວຂອງນາງວ່າ, “ຄົນຂອງ ພຣະເຈົ້າ ໄດ້ມາຫາຂ້ອຍ ເພິ່ນ
ເປັນໜ້າຢ້ານດັ່ງທູດຂອງ ພຣະເຈົ້າ ຂ້ອຍເອງກໍບໍ່ໄດ້ຖາມເລີຍວ່າເພິ່ນມາຈາກໃສ ແລະເພິ່ນບໍ່
ໄດ້ບອກຊື່ຂອງເພິ່ນໃຫ້ຂ້ອຍຮູ້. 7ແຕ່ເພິ່ນໄດ້ບອກຂ້ອຍວ່າ ຂ້ອຍຈະຕ້ອງຖືພາ ແລະຈະໄດ້ລູກ
ຊາຍ ເພິ່ນຍັງໄດ້ບອກຂ້ອຍບໍ່ໃຫ້ດື່ມນໍ້າອະງຸ່ນຫລືເຫລົ້າ ແລະ ຢ່າກິນອາຫານທີ່ຫວງຫ້າມ
ເພາະເດັກນ້ອຍນັ້ນຈະເປັນຄົນ ນາຊີຣີ ທີ່ອຸທິດຕົວແດ່ ພຣະເຈົ້າ ຕະຫລອດຊົ່ວຊີວິດຂອງລາວ.”

8ແລ້ວ ມາໂນອາ ກໍອ້ອນວອນຕໍ່ ພຣະຜູ້ເປັນເຈົ້າ ວ່າ, “ຂ້າແດ່ ພຣະຜູ້ເປັນເຈົ້າ ຂໍຊົງ ໂຜດສົ່ງ
ຄົນຂອງພຣະອົງກັບຄືນມາຫາພວກຂ້ານ້ອຍອີກ ແລະຂໍຊົງບອກພວກຂ້ານ້ອຍວ່າຈະເຮັດຢ່າງ-
ໃດກັບເດັກທີ່ຈະເກີດມານັ້ນ.” 9ສ່ວນ ພຣະເຈົ້າ ກໍຊົງເຮັດຕາມຄຳທີ່ ມາໂນອາ ຂໍຮ້ອງ ຄືທູດຂອງ
ພຣະອົງໄດ້ກັບຄືນມາຫາຍິງນັ້ນ ໃນຂະນະທີ່ນາງກຳລັງນັ່ງຢູ່ໃນທົ່ງນາ ແຕ່ໃນເວລານັ້ນ ມາ-
ໂນອາ ຜູ້ເປັນຜົວບໍ່ໄດ້ຢູ່ທີ່ນັ້ນນຳນາງ. 10ດັ່ງນັ້ນ ນາງຈຶ່ງແລ່ນໄປບອກຜົວວ່າ, “ນີ້ນະ! ຜູ້ທີ່ມາຫາ
ຂ້ອຍມື້ກ່ອນນັ້ນໄດ້ປະກົດຕໍ່ຂ້ອຍອີກແລ້ວ.” 11ມາໂນອາ ຈຶ່ງລຸກຂຶ້ນຕາມເມຍໄປ ລາວໄປຫາ
ຊາຍຄົນນັ້ນ ແລະຖາມວ່າ, “ແມ່ນທ່ານນີ້ບໍ ທີ່ເປັນຜູ້ເວົ້າກັບເມຍຂອງຂ້ານ້ອຍ?” ຊາຍຄົນນັ້ນກໍ
ຕອບວ່າ, “ແມ່ນແລ້ວ.” 12ມາໂນອາ ຈຶ່ງເວົ້າວ່າ, “ເມື່ອຄຳທີ່ທ່ານໄດ້ເວົ້ານັ້ນກາຍເປັນຄວາມຈິງ
ແລ້ວ ເດັກນັ້ນຈະຕ້ອງປະພຶດຢ່າງໃດແລະຈະເຮັດຫຍັງ?” 13ທູດຂອງ ພຣະຜູ້ເປັນເຈົ້າ ໄດ້ຕອບ
ມາໂນອາ ວ່າ, “ເມຍຂອງເຈົ້າຕ້ອງເຮັດທຸກຢ່າງຕາມທີ່ເຮົາໄດ້ບອກລາວນັ້ນຢ່າງແນ່ນອນ.”
14ນາງບໍ່ຕ້ອງກິນຫຍັງຈັກຢ່າງທີ່ໄດ້ມາຈາກຕົ້ນອະງຸ່ນ ບໍ່ຕ້ອງດື່ມນໍ້າອະງຸ່ນ ຫລືເຫລົ້າ ແລະຢ່າ
ກິນອາຫານທີ່ຫວງຫ້າມ ນາງຕ້ອງເຮັດທຸກສິ່ງຕາມທີ່ເຮົາໄດ້ບອກນາງແລ້ວ.” 15-16ເນື່ອງຈາກ
ມາໂນອາ ບໍ່ຮູ້ຈັກວ່າແມ່ນທູດຂອງ ພຣະຜູ້ເປັນເຈົ້າ ລາວຈຶ່ງເວົ້າຕໍ່ພຣະອົງວ່າ, “ກະລຸນາຢູ່ນີ້
ກ່ອນ ຂໍໃຫ້ພວກຂ້ານ້ອຍເອົາແບ້ນ້ອຍມາຈັດແຈງອາຫານໃຫ້ທ່ານຮັບປະທານເສຍກ່ອນ” ແຕ່
ທູດອົງນັ້ນເວົ້າຕໍ່ລາວວ່າ, “ຖ້າວ່າເຮົາຢູ່ນີ້ ເຮົາກໍຈະບໍ່ກິນອາຫານຂອງເຈົ້າ ແຕ່ຖ້າເຈົ້າຢາກຈັດ
ແຈງອາຫານ ຈົ່ງເອົາແບ້ນັ້ນເຜົາຖວາຍບູຊາແດ່ ພຣະຜູ້ເປັນເຈົ້າ.” 17ມາໂນອາ ຈຶ່ງເວົ້າຕໍ່ທູດອົງ
ນັ້ນວ່າ, “ກະລຸນາບອກຊື່ຂອງທ່ານໃຫ້ຂ້ານ້ອຍຮູ້ດ້ວຍ ຫາກເມື່ອໃດຄຳທີ່ທ່ານບອກນີ້ກາຍເປັນ

ຈິງ ຂ້ານ້ອຍຈະໄດ້ຖວາຍກຽດແດ່ທ່ານ.” 18ທູດຂອງພຣະຜູ້ເປັນເຈົ້າໄດ້ຖາມລາວວ່າ, “ຊື່ຂອງ
ເຮົາເປັນເລື່ອງອັດສະຈັນ ເຈົ້າຢາກຮູ້ຈັກເຮັດຫຍັງ?” 19ແລ້ວ ມາໂນອາ ໄດ້ເອົາແບ້ໜຸ່ມກັບເມັດ
ເຂົ້າໃສ່ແທ່ນບູຊາຫີນຖວາຍແດ່ ພຣະຜູ້ເປັນເຈົ້າ ຜູ້ຊົງເຮັດການອັດສະຈັນ. 20ໃນຂະນະທີ່ແປວ-
ໄຟກຳລັງລຸກຂຶ້ນຈາກແທ່ນບູຊາ ມາໂນອາ ແລະເມຍກໍເຫັນທູດຂອງ ພຣະຜູ້ເປັນເຈົ້າ ຂຶ້ນໄປສູ່
ສະຫວັນໃນແປວໄຟນັ້ນ.

21ພວກເຂົາຈຶ່ງພາກັນໝູບໜ້າລົງດິນ ມາໂນອາ ຮູ້ວ່າຊາຍນັ້ນແມ່ນທູດຂອງ ພຣະຜູ້ເປັນເຈົ້າ
ແທ້ ຫລັງຈາກນັ້ນ ມາໂນອາ ກັບເມຍຂອງລາວກໍບໍ່ເຫັນທູດຂອງ ພຣະຜູ້ເປັນເຈົ້າ ອີກເລີຍ.
22ແລ້ວ ມາໂນອາ ໄດ້ເວົ້າຕໍ່ເມຍຂອງຕົນວ່າ, “ພວກເຮົາຈະຕ້ອງຕາຍ ເພາະພວກເຮົາໄດ້ເຫັນ
ພຣະເຈົ້າ.” 23ແຕ່ເມຍຂອງລາວຕອບວ່າ, “ຖ້າ ພຣະຜູ້ເປັນເຈົ້າ ຕ້ອງການຂ້າພວກເຮົາ ພຣະອົງ
ຄົງບໍ່ຍອມຮັບເອົາເຄື່ອງບູຊາຂອງພວກເຮົາ ແລະຄົງບໍ່ໃຫ້ພວກເຮົາເຫັນສິ່ງທັງຫລາຍນີ້ ພຣະ-
ອົງຄົງຈະບໍ່ບອກເລື່ອງຢ່າງນີ້ ໃຫ້ພວກເຮົາຮູ້ຈັກດອກ.”

24ຕໍ່ມາ ຍິງຜູ້ນີ້ກໍໄດ້ລູກຊາຍ ແລະໃສ່ຊື່ວ່າ ແຊມຊັນ ເດັກນີ້ກໍຈະເລີນເຕີບໂຕຂຶ້ນ ແລະ
ພຣະຜູ້ເປັນເຈົ້າ ກໍຊົງອວຍພອນລາວ. 25ໃນຂະນະທີ່ລາວຢູ່ໃນຄ້າຍພັກຊາວ ດານ ລະຫວ່າງ
ເມືອງ ໂຊຣາ ກັບເມືອງ ເອຊະຕາໂອນ ພຣະວິນຍານ ຂອງ ພຣະຜູ້ເປັນເຈົ້າ ໄດ້ຊົງເຮັດໃຫ້ລາວມີ
ຈິດໃຈກະວົນກະວາຍ.

# ບົດທີ 14

## ແຊມຊັນ ແລະຍິງສາວຊາວຕິມນາ

1ແຊມຊັນ ໄດ້ລົງໄປໃນເມືອງ ຕິມນາ ໃນເມືອງນີ້ລາວສັງເກດເຫັນຍິງສາວຊາວ ຟີລິດສະຕິນ
ຄົນໜຶ່ງ. 2ລາວຈຶ່ງກັບຄືນມາເຮືອນ ແລະເວົ້າສູ່ພໍ່ແມ່ຟັງວ່າ, “ຂ້ານ້ອຍໄດ້ສັງເກດເຫັນຍິງສາວ
ຊາວ ຟີລິດສະຕິນ ຄົນໜຶ່ງ ຢູ່ໃນເມືອງ ຕິມນາ ຂ້ານ້ອຍຢາກແຕ່ງງານກັບນາງ ໄປສູ່ຂໍນາງໃຫ້
ຂ້ານ້ອຍແດ່.” 3ແຕ່ພໍ່ແມ່ໄດ້ຕອບວ່າ, “ເປັນຫຍັງເຈົ້າຈຶ່ງຢາກໄປເອົາເມຍຊາວ ຟີລິດສະຕິນ ຊຶ່ງ
ເປັນພວກທີ່ບໍ່ໄດ້ຮັບພິທີຕັດ ເຈົ້າຊອກຫາຜູ້ສາວໃນເຊື້ອສາຍຂອງເຈົ້າເອງ ແລະໃນພວກປະ-
ຊາຊົນຂອງພວກເຮົານີ້ບໍ່ມີຊັ້ນບໍ?” ແຕ່ ແຊມຊັນ ບອກພໍ່ຂອງລາວວ່າ, “ຂ້ານ້ອຍພໍໃຈນຳນາງຜູ້
ດຽວເທົ່ານັ້ນ ໄປສູ່ຂໍນາງມາໃຫ້ຂ້ານ້ອຍແດ່.” 4ສ່ວນພໍ່ແມ່ຂອງ ແຊມຊັນ ກໍບໍ່ໄດ້ຮູ້ຈັກວ່າ ແມ່ນ
ພຣະຜູ້ເປັນເຈົ້າ ຊົງນຳພາ ແຊມຊັນ ເຮັດດັ່ງນີ້ ເພາະພຣະອົງຊົງຊອກຫາໂອກາດຕໍ່ສູ້ພວກ ຟີລິດ-
ສະຕິນ ຢູ່ ໃນເວລານີ້ພວກ ອິສຣາເອນ ກໍຢູ່ໃຕ້ອຳນາດຂອງພວກ ຟີລິດສະຕິນ.

5ຕໍ່ມາ ແຊມຊັນ ໄດ້ລົງໄປເມືອງ ຕິມນາ ພ້ອມກັບພໍ່ແມ່ ເມື່ອພວກເຂົາໄປຮອດສວນອະງຸ່ນ
ຂອງເມືອງນັ້ນ ມີສິງໜຸ່ມໂຕໜຶ່ງຮ້ອງ ກໍຈາບເຂົ້າໃສ່ ແຊມຊັນ. 6ແຕ່ ພຣະວິນຍານ ຂອງ ພຣະ-
ຜູ້ເປັນເຈົ້າ ຊົງບັນດານໃຫ້ ແຊມຊັນ ມີກຳລັງຈີກສິງໂຕນັ້ນດ້ວຍມືເປົ່າ ເໝືອນດັ່ງຈີກແບ້ໂຕ
ນ້ອຍໆ ແຕ່ລາວບໍ່ໄດ້ບອກໃຫ້ພໍ່ແມ່ຮູ້ສິ່ງທີ່ລາວໄດ້ເຮັດນັ້ນ.

7-8ຄັນແລ້ວ ລາວກໍໄປລົມສາວຜູ້ນັ້ນ ແລະພໍໃຈໃນນາງຫລາຍ ບໍ່ພໍເທົ່າໃດມື້ຕໍ່ມາ ແຊມຊັນ
ກໍກັບມາແຕ່ງງານກັບນາງ ໃນເວລານັ້ນລາວໄດ້ແວ່ອອກຈາກທາງໄປເບິ່ງຊາກສິງທີ່ລາວໄດ້ຂ້າ

ນັ້ນ ລາວກໍປະຫລາດໃຈເມື່ອໄດ້ເຫັນຮັງເຜິ້ງຢູ່ໃນຊາກໂຕສິງນັ້ນ. 9ລາວຈຶ່ງບີບເອົານໍ້າເຜິ້ງໃສ່ມື
ແລະກິນໄປຕາມທາງ ເມື່ອໄປຮອດພໍ່ແມ່ ລາວໄດ້ແບ່ງນໍ້າເຜິ້ງນັ້ນໃຫ້ເພິ່ນກິນນຳ ພໍ່ແມ່ຂອງ
ລາວກໍກິນ ແຕ່ ແຊມຊັນ ບໍ່ໄດ້ບອກພວກເພິ່ນເລີຍວ່າ ລາວໄດ້ເອົານໍ້າເຜິ້ງນັ້ນມາຈາກຊາກໂຕ
ສິງ.

10ແລ້ວພໍ່ຂອງ ແຊມຊັນ ໄດ້ໄປບ້ານຂອງຍິງສາວນັ້ນ ແລະ ແຊມຊັນ ກໍຈັດງານກິນລ້ຽງຂຶ້ນໃນ
ທີ່ນັ້ນຕາມທຳນຽມຂອງພວກຊາຍໜຸ່ມ. 11ເມື່ອພວກ ຟີລິດສະຕິນ ເຫັນລາວ ພວກເຂົາກໍເອົາຊາຍ
ໜຸ່ມສາມສິບຄົນໄປຮ່ວມກັບລາວ. 12-13ແຊມຊັນ ໄດ້ເວົ້າຕໍ່ພວກເຂົາວ່າ, "ຂໍໃຫ້ພວກເຈົ້າທວາຍ
ຈັກຂໍ້ໜຶ່ງ ຖ້າເຈົ້າທວາຍຄວາມໝາຍໄດ້ພາຍໃນເຈັດມື້ ກ່ອນພິທີແຕ່ງງານນີ້ສິ້ນສຸດລົງ ຂ້ອຍ
ຈະເອົາຜ້າປູນອນ ແລະເສື້ອໂຕຈົບງາມ ແນວລະສາມສິບໂຕໃຫ້ແກ່ພວກເຈົ້າ ຄັນຖ້າພວກເຈົ້າ
ບອກບໍ່ໄດ້ ຂໍໃຫ້ພວກເຈົ້ານຳເອົາສິ່ງຂອງຢ່າງດຽວກັນນີ້ມາໃຫ້ຂ້ອຍເດີ້" ພວກເຂົາຈຶ່ງເວົ້າຕໍ່
ແຊມຊັນ ວ່າ, "ຈົ່ງບອກຄຳທວາຍນັ້ນມາ." 14ແຊມຊັນ ຈຶ່ງເວົ້າວ່າ,

"ມີອາຫານກໍເນື່ອງມາຈາກຜູ້ກິນ
ມີຂອງອັນຫວານກໍເນື່ອງມາຈາກຜູ້ມີແຮງ"

ສາມມື້ຕໍ່ມາ ພວກເຂົາກໍຍັງຕີຄວາມໝາຍຂອງຄຳທວາຍນັ້ນບໍ່ໄດ້.

15ໃນມື້ທີສີ່ ພວກເຂົາໄດ້ເວົ້າຕໍ່ເມຍຂອງ ແຊມຊັນ ວ່າ, "ຈົ່ງວາງກົນອຸບາຍໃຫ້ຜົວຂອງເຈົ້າ
ບອກຄວາມໝາຍຂອງຄຳທວາຍນັ້ນແກ່ພວກຂ້ອຍແດ່ ຖ້າວ່າເຈົ້າບໍ່ຍອມປະຕິບັດ ພວກເຮົາຈະ
ເຜົາເຮືອນຂອງພໍ່ເຈົ້າພ້ອມກັບເຈົ້າດ້ວຍ ເຈົ້າທັງສອງໄດ້ເຊີນພວກຂ້ອຍມາ ເພື່ອຈະເຮັດໃຫ້
ພວກຂ້ອຍກາຍເປັນຄົນຈົນແມ່ນບໍ?" 16ເມຍຂອງ ແຊມຊັນ ຈຶ່ງໄປຫາຜົວພ້ອມທັງຮ້ອງໄຫ້ ແລະ
ເວົ້າວ່າ, "ເຈົ້າບໍ່ໄດ້ຮັກຂ້ອຍ ເຈົ້າມີແຕ່ຊັງຂ້ອຍເທົ່ານັ້ນ ເຈົ້າຕັ້ງຄຳທວາຍໃຫ້ໝູ່ຂອງຂ້ອຍ ແລະ
ບໍ່ໄດ້ບອກຄວາມໝາຍຂອງຄຳທວາຍນັ້ນໃຫ້ແກ່ຂ້ອຍ" ແຊມຊັນ ໄດ້ເວົ້າຕໍ່ເມຍວ່າ, "ແມ່ນແຕ່ພໍ່
ແມ່ຂອງຂ້ອຍກໍຍັງບໍ່ໄດ້ບອກເພິ່ນ ເຫດໃດຂ້ອຍຈຶ່ງຈະບອກເຈົ້າ." 17ເມຍຂອງ ແຊມຊັນ ຈຶ່ງ
ຮ້ອງໄຫ້ຍ້ອນເລື່ອງນີ້ຢູ່ຕະຫລອດເຈັດມື້ຂອງງານກິນລ້ຽງນັ້ນ ແຕ່ພໍຮອດມື້ທີເຈັດ ແຊມຊັນ ກໍ
ບອກຄຳຕອບແກ່ນາງ ເພາະວ່ານາງເປັນຄົນຊູຊີຫລາຍ ແລ້ວນາງກໍນຳເອົາຄຳຕອບນັ້ນໄປບອກ
ໝູ່ຂອງຕົນ. 18ດັ່ງນັ້ນ ໃນມື້ທີເຈັດກ່ອນ ແຊມຊັນ ເຂົ້າໄປນອນ ຊາວເມືອງນັ້ນຈຶ່ງເວົ້າຕໍ່ລາວວ່າ,

"ບໍ່ມີສິ່ງໃດຈະຫວານເໝືອນນໍ້າເຜິ້ງ
ແລະບໍ່ມີສິ່ງໃດຈະແຮງກວ່າໂຕສິງ"

ແຊມຊັນ ຈຶ່ງຕອບວ່າ,

"ຖ້າວ່າພວກເຈົ້າບໍ່ເອົາງົວແມ່ຂອງຂ້ອຍໄປໄຖນາ
ພວກເຈົ້າກໍຈະບໍ່ສາມາດຕອບບັນຫານີ້ໄດ້."

19ແລ້ວ ພຣະວິນຍານ ຂອງ ພຣະຜູ້ເປັນເຈົ້າ ໄດ້ຊົງບັນດານໃຫ້ ແຊມຊັນ ມີກຳລັງວັງຊາ ແລະ
ລາວໄດ້ລົງໄປໃນເມືອງ ອາຊະກາໂລນ ແລ້ວລາວໄດ້ຂ້າຊາຍສາມສິບຄົນຢູ່ທີ່ນັ້ນ ພ້ອມທັງໄດ້
ຍຶດເອົາເສື້ອຜ້າອັນຈົບງາມຂອງພວກເຂົາ ລາວໄດ້ແຈກເສື້ອຜ້ານັ້ນໃຫ້ແກ່ຜູ້ທີ່ທວາຍ ແລ້ວ

ແຊມຊັນກໍກັບຄືນເມືອບ້ານ ແລະໃຈຮ້າຍໃນເຫດການທີ່ເກີດຂຶ້ນຫລາຍ. 20ສ່ວນເມຍຂອງລາວ
ກໍໄດ້ຖືກຍົກໃຫ້ແກ່ເຈົ້າບ່າວປອມ.

# ບົດທີ 15

1ຕໍ່ມາ ຊຶ່ງເປັນຍາມກ່ຽວເຂົ້າບາເລ ແຊມຊັນໄດ້ໄປຢາມເມຍ ແລະໄດ້ເອົາແບ້ນ້ອຍໂຕໜຶ່ງ
ໄປໃຫ້ນາງ ແຊມຊັນໄດ້ເວົ້າຕໍ່ພໍ່ເຖົ້າວ່າ, "ຂ້ອຍຊິໄປຫ້ອງເມຍຂ້ອຍ" ແຕ່ພໍ່ເຖົ້າບໍ່ອະນຸຍາດໃຫ້
ລາວເຂົ້າໄປ. 2ພໍ່ເຖົ້າໄດ້ເວົ້າຕໍ່ແຊມຊັນວ່າ, "ຂ້ອຍຄິດວ່າເຈົ້າຊັງລາວແລ້ວ ຂ້ອຍຈຶ່ງຍົກລາວ
ໃຫ້ແກ່ໝູ່ຂອງເຈົ້າ ເຈົ້າເອົານ້ອງສາວລາວແທນສາ ເພາະນ້ອງຂອງລາວກໍງາມກວ່າລາວອີກ."
3ແຊມຊັນໄດ້ເວົ້າວ່າ, "ໃນເທື່ອນີ້ ຂ້ອຍຈະບໍ່ມີຄວາມຜິດ ຖ້າຂ້ອຍທຳຮ້າຍພວກຟີລິດສະຕິນ."
4ດັ່ງນັ້ນ ລາວຈຶ່ງໄປຈັບເອົາໝາຈອກສາມຮ້ອຍໂຕມາ ແລ້ວມັດຫາງຂອງມັນຜູກຜິດກັນເປັນຄູ່
ແລະມັດກະບອງໃສ່ນຳດ້ວຍ. 5ແລ້ວລາວໄດ້ໃຕ້ກະບອງ ແລະປ່ອຍຝູງໝາຈອກນັ້ນເຂົ້າໄປໃນ
ນາເຂົ້າບາເລຂອງພວກຟີລິດສະຕິນ ໄຟບໍ່ໄດ້ໄໝ້ພຽງແຕ່ເຂົ້າເທົ່ານັ້ນ ແຕ່ໄດ້ໄໝ້ເຂົ້າບາເລທີ່
ຍັງຢູ່ໃນທົ່ງນາ ພ້ອມທັງສວນໝາກກອກ ແລະສວນອະງຸ່ນອີກ. 6ພວກຟີລິດສະຕິນຈຶ່ງຖາມກັນ
ວ່າ, "ແມ່ນໃຜເປັນຜູ້ເຮັດດັ່ງນີ້?" ແລ້ວພວກເຂົາກໍຮູ້ວ່າແມ່ນແຊມຊັນເປັນຜູ້ເຮັດ ເພາະພໍ່ເຖົ້າ
ຂອງລາວທີ່ເມືອງຕິມນາ ໄດ້ຍົກເມຍຂອງແຊມຊັນໃຫ້ແກ່ໝູ່ຂອງລາວ ພວກເຂົາຈຶ່ງໄປເຜົາຍິງ
ຄົນນີ້ພ້ອມທັງເຮືອນພໍ່ຂອງລາວ. 7ແຊມຊັນໄດ້ເວົ້າຕໍ່ພວກເຂົາວ່າ, "ເມື່ອພວກເຈົ້າເຮັດຢ່າງນີ້
ຂ້ອຍຂໍສາບານວ່າ ຂ້ອຍຈະບໍ່ຍອມຈົນກວ່າຂ້ອຍໄດ້ເຮັດຕອບຄືນ." 8ແຊມຊັນໄດ້ຕໍ່ສູ້ພວກເຂົາ
ຢ່າງແຂງແຮງ ແລະໄດ້ຂ້າພວກເຂົາຫລາຍຄົນ ແລ້ວລາວກໍໜີໄປລີ້ຢູ່ໃນຖໍ້າທີ່ໜ້າຜາ ເອຕາມ.

## ແຊມຊັນຊະນະພວກຟີລິດສະຕິນ

9ຕໍ່ມາ ພວກຟີລິດສະຕິນໄດ້ມາຕັ້ງຄ້າຍພັກຢູ່ໃນເຂດແຂວງຢູດາ ເພື່ອໂຈມຕີເມືອງເລຮີ.
10ພວກຢູດາຈຶ່ງຖາມພວກເຂົາວ່າ, "ເປັນຫຍັງພວກເຈົ້າຈຶ່ງມາຮົບເສິກກັບພວກຂ້ອຍ?" ພວກ
ເຂົາໄດ້ຕອບວ່າ, "ພວກຂ້ອຍມາຈັບແຊມຊັນໄປຂັງຄຸກ ພວກຂ້ອຍຈະເຮັດຕໍ່ລາວຄືລາວໄດ້ເຮັດ
ຕໍ່ພວກຂ້ອຍ." 11ແລ້ວຊາວຢູດາສາມພັນຄົນກໍພາກັນໄປຍັງຖໍ້າທີ່ໜ້າຜາ ເອຕາມນັ້ນ ແລະເວົ້າ
ກັບແຊມຊັນວ່າ, "ເຈົ້າຮູ້ບໍ່ວ່າພວກຂ້ອຍຢູ່ໃຕ້ອຳນາດຂອງພວກຟີລິດສະຕິນ? ເປັນຫຍັງເຈົ້າຈຶ່ງ
ເຮັດຕໍ່ພວກຂ້ອຍແບບນີ້?" ແຊມຊັນກໍຕອບວ່າ, "ຂ້ອຍເຮັດຕໍ່ພວກຟີລິດສະຕິນ ກໍຍ້ອນວ່າ
ພວກເຂົາໄດ້ເຮັດຕໍ່ຂ້ອຍກ່ອນ." 12ພວກເຂົາຈຶ່ງຕອບແຊມຊັນວ່າ. "ພວກຂ້ອຍມານີ້ເພື່ອຈັບມັດ
ເອົາເຈົ້າສົ່ງໄປໃຫ້ພວກຟີລິດສະຕິນ" ແຊມຊັນກໍເວົ້າຂຶ້ນວ່າ, "ພວກເຈົ້າສາບານກັບຂ້ອຍກ່ອນ
ວ່າ ພວກເຈົ້າຈະບໍ່ຂ້າຂ້ອຍ." 13ພວກເຂົາໄດ້ຕອບວ່າ, "ພວກຂ້ອຍຂໍສາບານວ່າຂ້ອຍຈະບໍ່ຂ້າ
ເຈົ້າ ພຽງແຕ່ມາມັດເຈົ້າສົ່ງໃຫ້ພວກເຂົາເທົ່ານັ້ນ" ແລ້ວພວກເຂົາກໍມັດແຊມຊັນດ້ວຍເຊືອກໃໝ່
ສອງເສັ້ນແລະພາລາວໄປຈາກໜ້າຜານັ້ນ. 14ເມື່ອມາຮອດເມືອງເລຮີ ພວກຟີລິດສະຕິນກໍແລ່ນ
ມາພ້ອມທັງຮ້ອງດັງໃສ່ລາວ ແຕ່ພຣະວິນຍານຂອງພຣະຜູ້ເປັນເຈົ້າໄດ້ຊົງບັນດານໃຫ້ລາວມີ-
ແຮງຂຶ້ນ ແຊມຊັນຈຶ່ງດຶງເຊືອກທີ່ມັດແຂນ ແລະມືຂອງລາວນັ້ນຂາດອອກຄືກັບ ໄຟໄດ້ໄໝ້ເສັ້ນ
ດ້າຍ. 15ແລ້ວແຊມຊັນໄດ້ເຫັນກະດູກຄາງລໍທີ່ຍັງໃໝ່ຢູ່ ລາວຈຶ່ງເດ່ມືລົງຈັບເອົາ ແລະໄດ້ໃຊ້

ກະດູກຄາງລໍນັ້ນຂ້າພວກ ຟີລິດສະຕິນ ຕາຍໄປພັນຄົນ. [16]ດັ່ງນັ້ນ ແຊມຊັນ ຈຶ່ງຮ້ອງເພງວ່າ,

"ຂ້ອຍໄດ້ຂ້າພັນຄົນ ດ້ວຍກະດູກຄາງລໍອັນດຽວ
ຂ້ອຍໄດ້ກອງພວກເຂົາໄວ້ເປັນກອງໆຍ້ອນກະດູກຄາງລໍອັນນີ້."

[17]ຫລັງຈາກນັ້ນ ແຊມຊັນກໍແກວ່ງກະດູກລໍຖິ້ມ ບ່ອນນັ້ນຈຶ່ງມີຊື່ເອີ້ນວ່າ ພູກະດູກຄາງລໍ.
[18]ຕໍ່ມາ ແຊມຊັນຫິວນໍ້າຫລາຍ ລາວຈຶ່ງຮ້ອງທູນຕໍ່ພຣະຜູ້ເປັນເຈົ້າວ່າ, "ພຣະອົງຊົງປະທານ
ໄຊຊະນະອັນຍິ່ງໃຫຍ່ໃຫ້ແກ່ຂ້ານ້ອຍ ດຽວນີ້ຂ້ານ້ອຍຫິວນໍ້າຈະຕາຍຢູ່ແລ້ວ ແລະຈະໃຫ້ຂ້າ-
ນ້ອຍຕົກຢູ່ໃນກໍາມືຂອງພວກ ຟີລິດສະຕິນ ທີ່ຍັງບໍ່ທັນໄດ້ຮັບພິທີຕັດຢ່າງນັ້ນບໍ?" [19]ຄັນແລ້ວ
ພຣະເຈົ້າກໍຊົງບັນດານໃຫ້ມີນໍ້າອອກບໍ່ໃນຂຸມໜຶ່ງທີ່ເມືອງ ເລຮີ ແຊມຊັນ ຈຶ່ງດື່ມ ແລະຮູ້ສຶກສະ-
ບາຍໃຈກວ່າເກົ່າ ດັ່ງນັ້ນ ເພິ່ນຈຶ່ງເອີ້ນບໍ່ນໍ້ານັ້ນວ່າ ເອັນ-ຮັກໂກເຣ ຊຶ່ງຍັງມີຢູ່ໃນເມືອງ ເລຮີ
ຈົນເທົ່າທຸກມື້ນີ້. [20]ໃນລະຫວ່າງພວກ ອິສຣາເອນ ຢູ່ໃຕ້ອໍານາດຂອງພວກ ຟີລິດສະຕິນ ນັ້ນ
ແຊມຊັນ ໄດ້ປົກຄອງພວກອິສຣາເອນຢູ່ເປັນເວລາຊາວປີ.

# ບົດທີ 16

## ແຊມຊັນທີ່ເມືອງຄາຊາ

[1]ຕໍ່ມາ ແຊມຊັນ ໄດ້ຈາກເມືອງ ເລຮີ ໄປຍັງເມືອງຄາຊາ ຢູ່ໃນເມືອງນີ້ ລາວໄດ້ພົບຍິງໂສ-
ເພນີຄົນໜຶ່ງ ລາວຈຶ່ງເຂົ້າໄປນອນຢູ່ນໍາຍິງນັ້ນ. [2]ເມື່ອຊາວ ຄາຊາ ຮູ້ວ່າ ແຊມຊັນຢູ່ໃນບ່ອນນັ້ນ
ພວກເຂົາກໍພາກັນມາອ້ອມ ແລະຄອຍຖ້າລາວຢູ່ປະຕູເມືອງຕະຫລອດຄືນ ພວກເຂົາພາກັນງຽບ
ຢູ່ຕະຫລອດທັງຄືນ ແລະຄິດວ່າ, "ພວກເຮົາຈຶ່ງຄອຍຖ້າຈົນຮອດມື້ອື່ນເຊົ້າ ແລະຕ້ອງຂ້າລາວ
ຖິ້ມ." [3]ແຕ່ ແຊມຊັນ ໄດ້ນອນຢູ່ບ່ອນນັ້ນຮອດຕອນທ່ຽງຄືນເທົ່ານັ້ນ ລາວກໍລຸກໄປດຶງປະຕູເມືອງ
ພ້ອມທັງບານ ວົງ ແລະໄລປະຕູອອກ ແລ້ວແບກໄປທີ່ຍອດພູຢູ່ໃກ້ເມືອງ ເຮັບໂຣນ.

## ແຊມຊັນ ແລະນາງເດລີລາ

[4]ຫລັງຈາກນັ້ນ ແຊມຊັນ ກໍມີຄວາມຮັກໄຄ່ກັບຍິງຄົນໜຶ່ງຊື່ນາງ ເດລີລາ ທີ່ຮ່ອມພູ ໂສເຣັກ.
[5]ພວກຜູ້ນໍາ ຟີລິດສະຕິນ ຈຶ່ງໄປຫາຍິງຄົນນັ້ນເວົ້າວ່າ, "ໃຫ້ເຈົ້າວາງກົນອຸບາຍຖາມ ແຊມຊັນ ວ່າ
ເປັນຫຍັງລາວຈຶ່ງມີແຮງແທ້? ພວກຂ້ອຍຈະຊະນະ ແລະຈັບລາວໄດ້ດ້ວຍວິທີໃດ? ແລ້ວພວກ
ຂ້ອຍທຸກຄົນຈະເອົາເງິນໃຫ້ເຈົ້າ ຜູ້ລະພັນໜຶ່ງຮ້ອຍຫລຽນ."
[6]ດັ່ງນັ້ນ ນາງ ເດລີລາ ຈຶ່ງເວົ້າຕໍ່ ແຊມຊັນ ວ່າ, "ກະລຸນາບອກໃຫ້ຂ້ອຍຮູ້ແດ່ວ່າ ເປັນຫຍັງເຈົ້າ
ຈຶ່ງມີກໍາລັງວັງຊາຫລາຍແທ້? ຖ້າວ່າມີຄົນໃດຄົນໜຶ່ງຕ້ອງການມັດເຈົ້າ ແລະເຮັດໃຫ້ເຈົ້າເສຍ-
ທ່າ ລາວຈະຕ້ອງເຮັດຢ່າງໃດ." [7]ແຊມຊັນ ກໍຕອບວ່າ, "ຖ້າວ່າພວກເຂົາມັດຂ້ອຍດ້ວຍເຊືອກ
ໜ້າທະນູໃໝ່ໆ ເຈັດເສັ້ນທີ່ຍັງບໍ່ທັນແຫ້ງ ຂ້ອຍຈະກາຍເປັນຄົນອ່ອນແອເໝືອນດັ່ງຄົນອື່ນໆ."
[8-9]ເມື່ອຮູ້ດັ່ງນັ້ນ ພວກຜູ້ນໍາ ຟີລິດສະຕິນ ກໍນໍາເອົາເຊືອກໜ້າທະນູທີ່ຍັງໃໝ່ ແລະຍັງບໍ່ທັນແຫ້ງ
ເຈັດເສັ້ນມາໃຫ້ ເດລີລາ ນາງຈຶ່ງໃຫ້ຄົນໜຶ່ງຄອຍຖ້າຢູ່ໃນຫ້ອງອື່ນ ສ່ວນນາງເອງໄດ້ເອົາເຊືອກ
ນັ້ນມັດ ແຊມຊັນ ແລ້ວນາງກໍຮ້ອງບອກ ແຊມຊັນ ວ່າ, "ແຊມຊັນ ພວກ ຟີລິດສະຕິນ ມາ!" ແຕ່
ແຊມຊັນ ໄດ້ດຶງເຊືອກນັ້ນຂາດເໝືອນດັ່ງໄຟໄໝ້ເສັ້ນດ້າຍ ດ້ວຍເຫດນີ້ພວກ ຟີລິດສະຕິນ ຈຶ່ງຍັງ

ບໍ່ຮູ້ຂໍ້ເລິກລັບກ່ຽວກັບກຳລັງພາຍໃນຂອງລາວ.
10ຕໍ່ມາ ນາງ ເດລີລາ ໄດ້ເວົ້າຕໍ່ ແຊມຊັນ ອີກວ່າ, “ເຈົ້າໄດ້ລໍ້ລວງຂ້ອຍ ແລະເວົ້າຕົວະຂ້ອຍ
ສະນັ້ນ ຂໍໃຫ້ເຈົ້າບອກຂ້ອຍແດ່ວ່າ ລາວຈະຕ້ອງມັດເຈົ້າດ້ວຍວິທີໃດ?” 11ແຊມຊັນ ຈຶ່ງບອກ
ນາງວ່າ, “ຖ້າລາວມັດຂ້ອຍດ້ວຍເຊືອກໃໝ່ທີ່ຍັງບໍ່ທັນໃຊ້ ຂ້ອຍຈະເປັນຄົນອ່ອນແອເໝືອນຄົນ
ອື່ນໆ.” 12ນາງ ເດລີລາ ຈຶ່ງເອົາເຊືອກໃໝ່ນັ້ນມາມັດລາວ ແລະຮ້ອງຂຶ້ນວ່າ, “ແຊມຊັນ ພວກຟີ-
ລິດສະຕິນ ມາ!” ແຊມຊັນ ກໍດຶງເຊືອກນັ້ນຂາດ ເໝືອນດຶງເສັ້ນດ້າຍ ສ່ວນພວກທີ່ຄອຍຖ້ານັ້ນຢູ່
ໃນຫ້ອງອື່ນ.
13ແລ້ວນາງ ເດລີລາ ໄດ້ເວົ້າຕໍ່ ແຊມຊັນ ວ່າ, “ເຈົ້າຍັງລໍ້ລວງຂ້ອຍ ແລະຕົວະຂ້ອຍອີກ ຂໍເຈົ້າ
ຈົ່ງບອກຂ້ອຍວ່າ ລາວຈະມັດເຈົ້າດ້ວຍສິ່ງໃດ?” ແຊມຊັນ ຈຶ່ງບອກວ່າ, “ຖ້າວ່າເຈົ້າເອົາຜົມຂອງ
ຂ້ອຍ ເຈັດປອຍໄປຕໍ່າໃນຫູກແລະຖືກພືມໃຫ້ແໜ້ນ ແລ້ວຂ້ອຍຈະກາຍເປັນຄົນອ່ອນແອເໝືອນ
ດັ່ງຄົນອື່ນ.” 14ນາງ ເດລີລາ ຈຶ່ງກ່ອມ ແຊມຊັນ ນອນ ແລ້ວເອົາຜົມຂອງ ແຊມຊັນ ເຈັດປອຍໄປຕໍ່າ
ໃນຫູກ ແລະຖືກພືມໃຫ້ແໜ້ນ ນາງຮ້ອງຂຶ້ນວ່າ, “ແຊມຊັນ ພວກຟີລິດສະຕິນ ມາ!” ແຊມຊັນກໍ
ລຸກຂຶ້ນຖອດພືມ ແລະດຶງເຄືອຫູກອອກໝົດ.
15ດັ່ງນັ້ນ ນາງ ເດລີລາ ຈຶ່ງ ເວົ້າຕໍ່ ແຊມຊັນ ວ່າ, “ເປັນຫຍັງ ເຈົ້າຈຶ່ງ ເວົ້າວ່າເຈົ້າຮັກຂ້ອຍ ໃນ
ເມື່ອຈິດໃຈຂອງ ເຈົ້າບໍ່ໄດ້ຜູກພັນຢູ່ກັບຂ້ອຍ? ເຈົ້າໄດ້ລໍ້ລວງຂ້ອຍເຖິງສາມເທື່ອແລ້ວ ແລະເຈົ້າ
ຍັງບໍ່ທັນບອກຂ້ອຍເລີຍວ່າ ດ້ວຍເຫດໃດເຈົ້າຈຶ່ງມີແຮງຫລາຍແທ້? 16ນາງ ເດລີລາ ໄດ້ຖາມຢູ່
ທຸກມື້ ຈົນ ແຊມຊັນ ເບື່ອໜ່າຍ ແລະຢາກຈະຕາຍເສຍຍ້ອນການຊູຊີຂອງນາງ. 17ຜົນສຸດທ້າຍ
ແຊມຊັນ ກໍບອກນາງຕາມຄວາມຈິງວ່າ, “ຂ້ອຍບໍ່ເຄີຍຕັດຜົມຈັກເທື່ອ ເພາະວ່າຕັ້ງແຕ່ຂ້ອຍເກີດ
ມາຂ້ອຍໄດ້ເປັນຄົນ ນາຊີຣີ ທີ່ອຸທິດຕົວແດ່ ພຣະເຈົ້າ ຖ້າຂ້ອຍຕັດຜົມ ຂ້ອຍຈະຕ້ອງສູນເສຍກຳ-
ລັງວັງຊາ ແລະຈະກາຍເປັນຄົນອ່ອນແອເໝືອນດັ່ງຄົນອື່ນໆ. 18ເມື່ອນາງ ເດລີລາ ແນ່ໃຈວ່າ
ແຊມຊັນ ໄດ້ບອກຄວາມຈິງ ນາງກໍສົ່ງຂ່າວໄປບອກພວກຜູ້ນຳຟີລິດສະຕິນ ວ່າ, “ເຊີນກັບມາອີກ
ເທື່ອໜຶ່ງ ເພາະ ແຊມຊັນ ໄດ້ບອກຄວາມຈິງໃຫ້ແກ່ຂ້ອຍແລ້ວ” ພວກເຂົາຈຶ່ງພາກັນມາພ້ອມທັງຖື
ເງິນມາພ້ອມ. 19ນາງ ເດລີລາ ໄດ້ກ່ອມ ແຊມຊັນ ນອນເທິງຕັກຂອງນາງແລະເອີ້ນໃຫ້ຜູ້ໜຶ່ງມາຕັດ
ຜົມຂອງລາວອອກເຈັດປອຍ ແລ້ວນາງໄດ້ຊຸກໃຫ້ ແຊມຊັນ ຕື່ນ ແຕ່ລາວບໍ່ມີແຮງ ເສຍແລ້ວ.
20ນາງ ເດລີລາ ຈຶ່ງຮ້ອງຂຶ້ນວ່າ, “ແຊມຊັນ ພວກ ຟີລິດສະຕິນ ມາ!” ແຊມຊັນ ໄດ້ລຸກຂຶ້ນ ແລະ
ຄິດວ່າ, “ຂ້ອຍຈະຕ້ອງໄປໄດ້ສະບາຍເໝືອນດັ່ງແຕ່ກ່ອນ” ລາວບໍ່ຮູ້ເລີຍວ່າ ພຣະຜູ້ເປັນເຈົ້າບໍ່
ຊົງສະຖິດຢູ່ກັບລາວແລ້ວ. 21ຕໍ່ມາ ພວກ ຟີລິດສະຕິນ ໄດ້ຈັບ ແຊມຊັນ ແລະເຈາະໜ່ວຍຕາທັງ
ສອງຂອງລາວອອກ ພວກເຂົາໄດ້ນຳລາວໄປເມືອງ ຄາຊາ ແລະໂສ້ທອງຜູກລາວໄວ້ ລາວຖືກ
ພວກເຂົາບັງຄັບໃຫ້ໂມ້ແປ້ງຢູ່ໃນຄຸກ. 22ສ່ວນຜົມຂອງລາວໄດ້ເລີ່ມປົ່ງຂຶ້ນຄືນອີກ.

## ແຊມຊັນເສຍຊີວິດ

23ສ່ວນ ຟີລິດສະຕິນ ໄດ້ພາກັນ ມາສະເຫລີມສະຫລອງງານ ຖວາຍ ບູຊາ ແກ່ພະ ດາໂກນ ຂອງ
ພວກເຂົາຄັ້ງຍິ່ງໃຫຍ່ ພວກເຂົາຮ້ອງເພງສັນລະເສີນວ່າ, “ພະຂອງພວກເຮົາໄດ້ໃຫ້ພວກເຮົາ
ຊະນະ ແຊມຊັນ ຜູ້ເປັນສັດຕູຂອງພວກເຮົາ.” 24ເມື່ອປະຊາຊົນຫລຽວເຫັນ ແຊມຊັນ ພວກເຂົາກໍ

ຮ້ອງເພງສັນລະເສີນພະຂອງເຂົາວ່າ, "ພະຂອງພວກເຮົາໄດ້ໃຫ້ພວກເຮົາຊະນະສັດຕູຂອງພວກ
ເຮົາ ຊຶ່ງເປັນຜູ້ທຳລາຍພືນແຜ່ນດິນ ແລະຂ້າພວກເຮົາຫລາຍຄົນ."
25ພວກເຂົາພາກັນຊົມຊື່ນຍິນດີ ແລະເວົ້າວ່າ, "ຈົ່ງເອີ້ນ ແຊມຊັນ ມາ ແລ້ວບັງຄັບໃຫ້ລາວເຮັດ
ຕະຫລົກໃຫ້ເຮົາເບິ່ງ" ເມື່ອພວກເຂົາໄດ້ພາ ແຊມຊັນ ອອກມາຈາກຄຸກ ແຊມຊັນ ກໍເຮັດໃຫ້ພວກ
ເຂົາເບິ່ງ ແລະພວກເຂົາໄດ້ໃຫ້ ແຊມຊັນ ຢືນຢູ່ລະຫວ່າງກາງເສົາເຮືອນ. 26ແຊມຊັນ ໄດ້ເວົ້າຕໍ່
ເດັກນ້ອຍຜູ້ຈູງມືລາວມານັ້ນວ່າ, "ຈົ່ງພາຂ້ອຍໄປຢືນຢູ່ແປະເສົາຄ້ຳທຳໂຮງນີ້ແດ່ ເພາະຂ້ອຍຢາກ
ອີງເສົາ." 27ໃນເວລານັ້ນ ທຳໂຮງໄດ້ເຕັມໄປດ້ວຍປະຊາຊົນທັງຊາຍແລະຍິງ ພວກຜູ້ນຳ ຟີລິດ-
ສະຕິນ ທຸກໆ ຄົນກໍຢູ່ໃນທີ່ນັ້ນ ຢູ່ເທິງຫລັງຄາພຽງກໍມີປະຊາຊົນທັງຊາຍແລະຍິງປະມານສາມ
ພັນຄົນ ຊຶ່ງພວກເຂົາກຳລັງຈ້ອງເບິ່ງ ແຊມຊັນ ເຮັດຕະຫລົກຢູ່. 28ແຊມຊັນ ໄດ້ອ້ອນວອນ ພຣະ-
ຜູ້ເປັນເຈົ້າວ່າ, "ຂ້າແດ່ພຣະຜູ້ເປັນເຈົ້າ ຂໍໂຜດຈື່ຈຳຂ້ານ້ອຍ ຂໍພຣະອົງຈົ່ງຊົງປະທານກຳລັງ-
ວັງຊາໃຫ້ຂ້ານ້ອຍອີກແດ່ພຽງເທື່ອໜຶ່ງເທື່ອດຽວເທົ່ານັ້ນ ເພາະຂ້ານ້ອຍຄຽດຍ້ອນພວກເຂົາເຈາະ
ຕາສອງເບື້ອງຂອງຂ້ານ້ອຍອອກ ຂ້ານ້ອຍຈະລ້າງແຄ້ນພວກ ຟີລິດສະຕິນ." 29ແຊມຊັນ ກໍເອົາມື
ສອງເບື້ອງຄ້ຳເສົາກາງສອງເສົາທີ່ຄ້ຳທຳໂຮງນັ້ນ ແລ້ວລາວໄດ້ທຸ້ມເທກຳລັງຂອງລາວຊຸກເສົາທັງ
ສອງນັ້ນ. 30ພ້ອມກັບຮ້ອງຂຶ້ນວ່າ, "ຂໍໃຫ້ຂ້ານ້ອຍຕາຍພ້ອມກັບຊາວເມືອງ ຟີລິດສະຕິນ ນີ້ເທີ້ນ"
ລາວຊຸກເສົານັ້ນໝົດແຮງຂອງລາວ ຈົນທຳໂຮງໄດ້ເຈື່ອນລົງທັບພວກຜູ້ນຳ ແລະຄົນອື່ນທຸກໆ
ຄົນ ແຊມຊັນ ໄດ້ຂ້າຄົນໃນເວລາເສຍຊີວິດນີ້ຫລາຍກວ່າຄາວຍັງມີຊີວິດຢູ່. 31ພວກຍາດພີ່ນ້ອງ
ແລະຄອບຄົວຂອງ ແຊມຊັນ ໄດ້ພາກັນມາເອົາສົບລາວກັບຄືນເມືອ ແລ້ວເອົາໄປຝັງໄວ້ໃນບ່ອນ
ຝັງສົບຂອງ ມາໂນອາ ພໍ່ຂອງລາວ ຢູ່ລະຫວ່າງເມືອງ ໂຊຣາ ແລະເມືອງ ເອຊະຕາໂອນ ແຊມຊັນ
ໄດ້ປົກຄອງພວກ ອິສຣາເອນ ຢູ່ເປັນເວລາຊາວປີ.

# ບົດທີ 17

## ຮູບເຄົາລົບໃນເຮືອນຂອງມີກາ

1ມີຊາຍຄົນໜຶ່ງ ເປັນຊາວ ເຂດພູເຂົາ ເອຟຣາຢິມ ຊື່ ມີກາ 2ລາວ ເວົ້າກັບ ແມ່ຂອງລາວວ່າ
"ເງິນໜຶ່ງພັນໜຶ່ງຮ້ອຍຫລຽນ ຊຶ່ງມີຄົນລັກໄປຈາກແມ່ ແລະແມ່ກໍໄດ້ສາບແຊ່ງ ແລະເວົ້າໃສ່ຫູ
ຂ້ອຍນັ້ນ ເບິ່ງແມ ເງິນນັ້ນຢູ່ທີ່ຂ້ອຍ ຂ້ອຍເອົາໄປເອງ" ແມ່ຂອງລາວຈຶ່ງເວົ້າວ່າ "ຂໍ ພຣະຜູ້-
ເປັນເຈົ້າ ອຳນວຍພຣະພອນໃຫ້ລູກຂອງແມ່ເຖີດ" 3ລາວຈຶ່ງນຳເງິນໜຶ່ງພັນໜຶ່ງຮ້ອຍຫລຽນນັ້ນມາ
ຄືນໃຫ້ແມ່ ແລະແມ່ຂອງລາວເວົ້າວ່າ "ເງິນນີ້ແມ່ໄດ້ຖວາຍແລ້ວແດ່ ພຣະຜູ້ເປັນເຈົ້າ ຈາກມືແມ່
ເພື່ອລູກ ໃຫ້ເຮັດເປັນຮູບແກະສະຫລັກ ແລະຮູບຫລໍ່ ບັດນີ້ແມ່ຈຶ່ງຄືນໃຫ້ແກ່ເຈົ້າ" 4ເມື່ອ ມີກາ
ຄືນເງິນໃຫ້ແກ່ແມ່ແລ້ວ ແມ່ກໍນຳເງິນສອງຮ້ອຍຫລຽນມອບໃຫ້ກັບຊ່າງເງິນ ເຮັດເປັນຮູບແກະ-
ສະຫລັກ ແລະຮູບຫລໍ່ ຮູບນັ້ນຢູ່ໃນເຮືອນຂອງ ມີກາ 5ມີກາ ຄົນນີ້ມີເຮືອນພະຫລັງໜຶ່ງ ລາວ
ເຮັດຮູບ ເອໂຟດ ແລະຮູບພະ ແລະ ແຕ່ງຕັ້ງໃຫ້ລູກຊາຍຄົນໜຶ່ງຂອງລາວເປັນປະໂລຫິດ 6ໃນ
ສະໄໝນັ້ນ ຍັງບໍ່ມີກະສັດໃນ ອິສຣາເອນ ທຸກຄົນກໍເຮັດຕາມທີ່ຕົນເອງເຫັນດີ.
7ມີຊາຍໜຸ່ມຄົນໜຶ່ງຊາວບ້ານ ເບັດເລເຮັມ ໃນ ຢູດາ ຄອບຄົວ ຢູດາ ເປັນພວກ ເລວີ ອາໄສຢູ່

ທັ້ນ [8]ຊາຍນັ້ນຍ່າງອອກຈາກເຮືອນທີ່ບ້ານ ເບັດເລເຮັມ ໃນຢູດາ ທ່ຽວຫາບ່ອນພັກອາໄສ ເມື່ອ
ລາວເດີນທາງໄປນັ້ນກໍມາເຖິງເຂດພູເຂົາ ເອຟຣາຢິມ ຄືເຮືອນຂອງ ມີກາ [9]ມີກາ ຈຶ່ງເວົ້າກັບລາວ
ວ່າ "ທ່ານມາຈາກໃສ" ລາວຕອບວ່າ "ຂ້າພະເຈົ້າເປັນພວກ ເລວີ ຊາວບ້ານ ເບັດເລເຮັມ ໃນຢູດາ
ຂ້າພະເຈົ້າເດີນທາງທ່ຽວຫາບ່ອນພັກອາໄສ" [10]ມີກາ ຈຶ່ງກ່າວແກ່ລາວວ່າ "ຈົ່ງຢູ່ກັບຂ້າພະເຈົ້າ
ສາ ເປັນຄືພໍ່ ແລະປະໂລຫິດຂອງຂ້າພະເຈົ້າກໍແລ້ວກັນ ຂ້າພະເຈົ້າຈະຈ່າຍເງິນໃຫ້ປີລະສິບເຊ
ເຂ ໃຫ້ເຄື່ອງແຕ່ງຕົວສຳລັບທ່ານ ແລະອາຫານກິນດ້ວຍ" ເລວີ ຄົນນັ້ນຈຶ່ງເຂົ້າໄປ [11]ເລວີ ຄົນ
ນັ້ນກໍພໍໃຈທີ່ຈະຢູ່ກັບ ມີກາ ແລະຊາຍໜຸ່ມຄົນນັ້ນກໍເປັນຄືກັບລູກຂອງລາວ [12]ມີກາ ກໍແຕ່ງຕັ້ງ
ເລວີ ຄົນນັ້ນ ແລະຊາຍໜຸ່ມຄົນນັ້ນໃຫ້ເປັນປະໂລຫິດຂອງລາວ ແລະຢູ່ໃນເຮືອນຂອງ ມີກາ
[13]ມີກາ ກ່າວວ່າ "ບັດນີ້ຂ້າພະເຈົ້າຮູ້ແລ້ວວ່າ ພຣະຜູ້ເປັນເຈົ້າ ຈະໃຫ້ຂ້າພະເຈົ້າຢູ່ເຢັນເປັນສຸກ
ເພາະວ່າຂ້າພະເຈົ້າມີ ເລວີ ຄົນໜຶ່ງເປັນປະໂລຫິດ."

# ບົດທີ 18

## ຄົນຕະກູນດ່ານເອົາປະໂລຫິດຂອງມີກາໄປໂດຍໃຊ້ກຳລັງ

[1]ໃນສະໄໝນັ້ນບໍ່ມີກະສັດໃນ ອິສຣາເອນ ແລະໃນສະໄໝນັ້ນ ຄົນຕະກູນ ດານ ຍັງທ່ຽວຫາທີ່
ດິນອັນຈະເປັນມໍລະດົກຂອງຕົນ ເພື່ອຈະໄດ້ພັກອາໄສ ເພາະວ່າຈົນບັດນັ້ນແລ້ວ ມໍລະດົກໃນໝູ່
ຄົນຕະກູນ ອິສຣາເອນ ຍັງບໍ່ຕົກແກ່ພວກເຂົາ [2]ດັ່ງນັ້ນ ຄົນ ດານ ຈຶ່ງສົ່ງຄົນຫ້າຄົນຈາກຈຳນວນ
ທັງໝົດເປັນຊາຍໜຸ່ມໃນຄອບຄົວຂອງຕົນ ມາຈາກ ໂຊຣາ ແລະຈາກ ເອຊະຕາໂອນ ໄປສອດ-
ແນມເບິ່ງແຜ່ນດິນ ແລະກວດເບິ່ງແຜ່ນດິນນັ້ນ ແລະພວກເຂົາທັງຫລາຍເວົ້າກັນວ່າ "ຈົ່ງໄປ
ກວດເບິ່ງແຜ່ນດິນນັ້ນ" ພວກເຂົາກໍມາຮອດເຂດພູເຂົາ ເອຟຣາຢິມ ທີ່ເຮືອນຂອງ ມີກາ ແລະ
ອາໄສຢູ່ທີ່ນັ້ນ [3]ເມື່ອພວກເຂົາຢູ່ໃກ້ເຮືອນຂອງ ມີກາ ພວກເຂົາກໍຈື່ສຽງ ເລວີ ໜຸ່ມຄົນນັ້ນໄດ້ ຈຶ່ງ
ແວະເຂົ້າໄປຖາມວ່າ "ໃຜພາທ່ານມາບ່ອນນີ້ ທ່ານເຮັດຫຍັງໃນບ່ອນນີ້ ທ່ານເຮັດວຽກອັນໃດໃນ
ບ່ອນນີ້" [4]ລາວຕອບຄົນເຫລົ່ານັ້ນວ່າ "ມີກາ ເຮັດແກ່ຂ້າພະເຈົ້າຢ່າງນີ້ຢ່າງນັ້ນ ລາວຈ້າງຂ້າພະ-
ເຈົ້າ ຂ້າພະເຈົ້າຈຶ່ງເປັນປະໂລຫິດຂອງລາວ" [5]ຄົນ ເຫລົ່ານັ້ນກໍເວົ້າກັບລາວວ່າ "ຂໍທູນຖາມ
ພຣະເຈົ້າ ໃຫ້ແດ່ ເພື່ອເຮົາຈະຮູ້ວ່າທາງທີ່ເຮົາຈະອອກເດີນໄປນີ້ຈະສຳເລັດຫລືບໍ່" [6]ປະໂລຫິດ
ນັ້ນຈຶ່ງຕອບພວກເຂົາທັງຫລາຍວ່າ "ຈົ່ງໄປເປັນສຸກສາ ຫົນທາງທີ່ທ່ານໄປຈະຢູ່ຕໍ່ໜ້າ ພຣະຜູ້-
ເປັນເຈົ້າ."

[7]ຊາຍທັງຫ້າຄົນກໍຈາກໄປຮອດເມືອງ ລາອິດ ເຫັນປະຊາຊົນທີ່ຢູ່ເມືອງນັ້ນ ເຫັນຊາວເມືອງຢູ່
ຢ່າງສະບາຍຕາມນິໄສຄົນຊີໂດນ ຢ່າງສະຫງົບ ບໍ່ຫວາດລະແວງອັນໃດ ແລະ ໃນແຜ່ນດິນນັ້ນ
ບໍ່ມີຜູ້ພິພາກສາທີ່ຈະໃຫ້ພວກເຂົາອັບອາຍໃນເລື່ອງໃດໆ ພວກເຂົາຢູ່ຫ່າງໄກຈາກຄົນຊີໂດນ ບໍ່
ມີເລື່ອງກ່ຽວຂ້ອງກັບຄົນອື່ນເລີຍ [8]ເມື່ອຄົນທັງຫ້າກັບມາຫາຍາດພີ່ນ້ອງທີ່ ໂຊຣາ ແລະ ເອຊະ-
ຕາໂອນ ຍາດພີ່ນ້ອງຈຶ່ງຖາມພວກເຂົາວ່າ "ເຈົ້າຈະວ່າແນວໃດ" [9]ພວກເຂົາຕອບວ່າ "ຈົ່ງລຸກ-
ຂຶ້ນ ໃຫ້ເຮົາໄປຮົບກັບພວກເຂົາສາ ເພາະວ່າເຮົາໄດ້ເຫັນແຜ່ນດິນນັ້ນແລ້ວ ແລະເບິ່ງແມ ເປັນ
ແຜ່ນດິນດີແທ້ໆ ທ່ານທັງຫລາຍຈະບໍ່ເຮັດຫຍັງເລີຍບໍ ຢ່າຊັກຊ້າທີ່ຈະໄປ ແລະເຂົ້າຍຶດຄອງ

ແຜ່ນດິນນັ້ນ [10]ເມື່ອທ່ານທັງຫລາຍໄປແລ້ວຈະພົບປະຊາຊົນທີ່ບໍ່ຫວາດລະແວງອັນໃດ ແຜ່ນດິນ
ກໍກວ້າງຂວາງ ພຣະເຈົ້າມອບໄວ້ໃນມືຂອງພວກທ່ານທັງຫລາຍແລ້ວ ເປັນສະຖານທີ່ຊຶ່ງບໍ່ຂາດ
ສິ່ງໃດທີ່ມີໃນໂລກ.”

[11]ຄົນຄອບຄົວ ດານ ຫົກຮ້ອຍຄົນພ້ອມດ້ວຍເຄື່ອງອາວຸດເຮັດສົງຄາມຍົກທັບອອກຈາກ ໂຊຣາ
ແລະ ເອຊະຕາໂອນ [12]ພວກເຂົາທັງຫລາຍຍົກທັບຂຶ້ນໄປຕັ້ງຄ້າຍຢູ່ທີ່ ກີຣິຢາດ-ເຢອາຣິມ ໃນຢູ-
ດາ ເພາະວ່າເຫດນີ້ ພວກເຂົາຈຶ່ງເອີ້ນວ່າ ມາຮາເນະ-ດານ (ທີ່ໝັ້ນຂອງພວກດານ) ຈົນເຖິງ
ທຸກມື້ນີ້ ເມືອງນີ້ຢູ່ທາງຫລັງ ກີຣິຢາດ-ເຢອາຣິມ [13]ພວກເຂົາກໍຜ່ານຈາກບ່ອນນັ້ນໄປຍັງເຂດພູ-
ເຂົາ ເອຟຣາຢິມ ມາຮອດເຮືອນຂອງ ມີກາ [14]ແລ້ວຊາຍທັງຫ້າຄົນທີ່ໄປສອດແນມເບິ່ງເມືອງ ລາ-
ອິດ ກໍບອກແກ່ພີ່ນ້ອງຂອງຕົນວ່າ “ທ່ານຮູ້ບໍ່ວ່າໃນເຮືອນເຫລົ່ານີ້ມີຮູບ ເອໂຟດ ຮູບພະ ຮູບ
ແກະສະຫລັກ ແລະຮູບຫລໍ່ສະນັ້ນ ຂໍສຳນຶກວ່າທ່ານທັງຫລາຍຈະເຮັດປະການໃດ” [15]ພວກເຂົາ
ທັງຫລາຍກໍແວະເຂົ້າເຮືອນຂອງ ເລວີ ໜຸ່ມຄົນນັ້ນ ຄືທີ່ເຮືອນຂອງ ມີກາ ຖາມເບິ່ງທຸກສຸກຂອງ
ລາວ [16]ຝ່າຍຄົນ ດານ ທັງຫົກຮ້ອຍຄົນຖືອາວຸດເຮັດສົງຄາມ ຢືນຢູ່ທີ່ທາງເຂົ້າປະຕູຮົ້ວ [17]ຊາຍ
ທັງຫ້າຄົນທີ່ອອກໄປສອດແນມເບິ່ງເຮືອນ ກໍຍ່າງເຂົ້າໄປນຳເອົາຮູບແກະສະຫລັກ ຮູບ ເອໂຟດ
ຮູບພະ ແລະຮູບຫລໍ່ໄປ ຝ່າຍປະໂລຫິດກໍຢືນຢູ່ທີ່ທາງເຂົ້າປະຕູຮົ້ວກັບທະຫານຖືອາວຸດເຮັດສົງ-
ຄາມຫົກຮ້ອຍຄົນນັ້ນ [18]ເມື່ອຄົນເຫລົ່ານີ້ເຂົ້າໄປໃນເຮືອນຂອງ ມີກາ ນຳເອົາຮູບແກະສະຫລັກ
ຮູບ ເອໂຟດ ຮູບພະ ແລະຮູບຫລໍ່ໄປ ປະໂລຫິດຖາມພວກເຂົາວ່າ “ນັ້ນທ່ານເຮັດຫຍັງ” [19]ຄົນ
ເຫລົ່ານັ້ນຈຶ່ງຕອບພວກເຂົາວ່າ “ງຽບໆ ໄວ້ເອົາມືປິດປາກໄວ້ ມາກັບເຮົາສາ ມາເປັນພໍ່ ແລະ
ປະໂລຫິດຂອງເຮົາ ຈະເປັນປະໂລຫິດໃນເຮືອນຂອງຊາຍຄົນດຽວ ຫລືວ່າຈະເປັນປະໂລຫິດ
ຂອງຕະກູນໜຶ່ງ ແລະຄອບຄົວໜຶ່ງໃນ ອິສຣາເອນ” [20]ໃຈຂອງປະໂລຫິດກໍຍິນດີ ລາວຈຶ່ງເອົາ
ຮູບ ເອໂຟດ ຮູບພະ ແລະຮູບແກະສະຫລັກ ຍ່າງໄປໃນໝູ່ປະຊາຊົນ.

[21]ພວກເຂົາກໍກັບອອກໄປ ແລະໃຫ້ເດັກນ້ອຍ ທັງຝູງສັດແລະສິ່ງຂອງໄປທາງໜ້າ [22]ເມື່ອໄປ
ຫ່າງຈາກເຮືອນ ມີກາ ແລ້ວ ຄົນທີ່ຢູ່ໃນເຮືອນໃກ້ຄຽງກັບເຮືອນຂອງ ມີກາ ກໍຮ່ວມຕິດຕາມໄປທັນ
ຄົນ ດານ [23]ຈຶ່ງເອີ້ນຄົນ ດານ ພວກເຂົາກໍຫັນກັບມາເວົ້າກັບ ມີກາ ວ່າ “ເປັນຫຍັງ ເຈົ້າຈຶ່ງຍົກທັບ
ມາຫລວງຫລາຍຢ່າງນີ້” [24]ພວກເຂົາຕອບວ່າ “ທ່ານທັງຫລາຍນຳພະຂອງຂ້າພະເຈົ້າຊຶ່ງຂ້າພະ-
ເຈົ້າສ້າງຂຶ້ນ ແລະນຳປະໂລຫິດອອກມາ ຂ້າພະເຈົ້າຈະມີອັນໃດເຫລືອຢູ່ ທ່ານທັງຫລາຍຍັງຈະ
ມາຖາມຂ້າພະເຈົ້າອີກວ່າ ‘ເປັນຫຍັງບໍ’” [25]ຄົນ ດານ ຈຶ່ງຕອບລາວວ່າ “ຢ່າໃຫ້ເຮົາໄດ້ຍິນສຽງ
ຂອງເຈົ້າອີກ ຢ້ານວ່າຄົນໃຈຮ້າຍຈະໄປຕີເຈົ້າ ເຈົ້າ ແລະຄອບຄົວຂອງເຈົ້າກໍຈະເສຍຊີວິດ
ລ້າງໆ” [26]ຝ່າຍຄົນ ດານ ກໍຍ່າງຕໍ່ໄປ ເມື່ອ ມີກາ ເຫັນວ່າພວກເຂົາເຫລົ່ານັ້ນມີກຳລັງຫລາຍກວ່າ
ຈຶ່ງຫັນກັບເດີນທາງໄປເຮືອນຂອງຕົນ.

[27]ຄົນດ່ານນຳເອົາສິ່ງທີ່ ມີກາ ສ້າງຂຶ້ນ ແລະນຳປະໂລຫິດຊຶ່ງເປັນຂອງລາວມານຳ ກໍເດີນ-
ທາງມາຮອດ ລາອິດ ມາເຖິງປະຊາຊົນທີ່ຢູ່ຢ່າງສະຫງົບ ແລະບໍ່ຫວາດລະແວງອັນໃດ ຈຶ່ງປະ-
ຫານຄົນເຫລົ່ານັ້ນດ້ວຍຄົມດາບແລະເອົາໄຟເຜົາເມືອງຖິ້ມ [28]ບໍ່ມີຜູ້ໃດມາຊ່ວຍເຫລືອ ເພາະວ່າ
ພວກເຂົາຢູ່ໄກຈາກເມືອງຊີໂດນ ແລະບໍ່ໄດ້ເຮັດການກ່ຽວຂ້ອງກັບຄົນອື່ນ ຢູ່ໃນຮ່ອມພູເຂົາຊຶ່ງຢູ່

ໃກ້ກັບເມືອງ ເບັດ-ເຣໂຮບ ຄົນເຫລົ່ານັ້ນກໍສ້າງເມືອງຂຶ້ນໃໝ່ ແລະອາໄສຢູ່ບ່ອນນັ້ນ [29]ພວກ
ເຂົາຕັ້ງຊື່ເມືອງນັ້ນວ່າດານ ຕາມຊື່ດານບັນພະບູລຸດຂອງພວກເຂົາ ຜູ້ຊຶ່ງເກີດກັບ ອິສຣາເອນ
ແຕ່ຕອນທຳອິດເມືອງນັ້ນຊື່ວ່າ ລາອິດ.

## ຄົນຕະກູນດານກາບໄຫວ້ຮູບເຄົາລົບ

[30]ຄົນດານກໍຕັ້ງຮູບແກະສະຫລັກໄວ້ ສ່ວນ ໂຢນາທານ ລູກຊາຍ ເກໂຊມ ລູກຊາຍຂອງ ມາ-
ນາເຊ ທັງເພິ່ນ ແລະບັນດາລູກຊາຍຂອງ ເພິ່ນກໍເປັນປະໂລຫິດໃຫ້ແກ່ຄົນຕະກູນດານຈົນຮອດ
ສະໄໝທີ່ແຜ່ນດິນຕົກໄປເປັນຊະເລີຍ [31]ພວກເຂົາໄດ້ຕັ້ງຮູບແກະສະຫລັກຊຶ່ງ ມີກາ ໄດ້ເຮັດໄວ້
ນັ້ນຂຶ້ນຕະຫລອດເວລາທີ່ພຣະວິຫານຂອງ ພຣະເຈົ້າຢູ່ທີ່ຊີໂລ.

# ບົດທີ 19

## ເມຍນ້ອຍຂອງຄົນເລວີຄົນໜຶ່ງຖືກຂ້າ

[1]ຢູ່ມາໃນສະໄໝນັ້ນ ເມື່ອບໍ່ມີກະສັດໃນ ອິສຣາເອນ ມີຄົນ ເລວີ ຄົນໜຶ່ງອາໄສຢູ່ແຖບພູເຂົາ
ເອຟຣາຢິມ ແຖບທີ່ໄກອອກໄປນັ້ນ ລາວໄດ້ຍິງຄົນໜຶ່ງຈາກ ເບັດເລເຮັມ ໃນ ຢູດາ ມາເປັນເມຍ
ນ້ອຍ [2]ເມຍນ້ອຍນັ້ນຫລິ້ນຊູ້ຈຶ່ງຖິ້ມຜົວກັບໄປຢູ່ເຮືອນພໍ່ຂອງນາງທີ່ ເບັດເລເຮັມ ໃນ ຢູດາ ຢູ່ບ່ອນ
ນັ້ນສີ່ເດືອນ [3]ຜົວຂອງນາງກໍລຸກຂຶ້ນໄປຕາມຫານາງ ເພື່ອໄປເວົ້າກັບນາງດ້ວຍຈິດໃຈເມດຕາ
ແລະຈະພານາງກັບຄືນ ລາວພາຄົນໃຊ້ຄົນໜຶ່ງ ແລະລາຄູ່ໜຶ່ງໄປນຳ ນາງພາລາວເຂົ້າໃນເຮືອນ
ພໍ່ຂອງນາງ ເມື່ອພໍ່ຂອງຜູ້ຍິງເຫັນກໍມີຄວາມຍິນດີຕ້ອນຮັບລາວ [4]ພໍ່ເຖົ້າຂອງລາວຄືພໍ່ຂອງຜູ້ຍິງ
ທີ່ໄດ້ໃຫ້ລາວຄອຍຖ້າຢູ່ ແລະລາວພັກຢູ່ນຳສາມມື້ ລາວກໍກິນ ແລະດື່ມ ແລະພັກນອນຢູ່ຫັ້ນ
[5]ຢູ່ມາ ມື້ທີສີ່ ພວກເຂົາທັງຫລາຍກໍຕື່ນຂຶ້ນແຕ່ເຊົ້າມືດ ແລະຄົນນັ້ນລຸກຂຶ້ນຈະອອກເດີນທາງ
ແຕ່ພໍ່ຂອງຜູ້ຍິງນັ້ນ ເວົ້າກັບ ລູກເຂີຍຂອງຕົນວ່າ "ຈົ່ງກິນອາຫານອີກຈັກໜ້ອຍໜຶ່ງ ໃຫ້ຊື່ນໃຈ
ແລ້ວພາຍຫລັງຈຶ່ງຄ່ອຍອອກເດີນທາງໄປ" [6]ຊາຍສອງຄົນນັ້ນກໍນັ່ງລົງກິນ ແລະດື່ມນຳກັນ
ແລະພໍ່ຂອງຜູ້ຍິງກໍບອກຊາຍນັ້ນວ່າ "ຈົ່ງຢູ່ອີກຈັກຄືນໜຶ່ງກ່ອນ ເຮັດຈິດໃຈໃຫ້ເບີກບານ" [7]ເມື່ອ
ຊາຍຄົນນັ້ນລຸກຂຶ້ນຈະອອກເດີນທາງ ພໍ່ເຖົ້າກໍຊັກຊວນໄວ້ ຈົນລາວຕ້ອງພັກຢູ່ບ່ອນນັ້ນອີກ [8]ໃນ
ວັນທີຫ້າ ເຂົາກໍຕື່ນແຕ່ເຊົ້າມືດເພື່ອຈະອອກເດີນທາງໄປ ພໍ່ຂອງຜູ້ຍິງນັ້ນເວົ້າວ່າ "ຂໍໃຫ້ຊື່ນໃຈ
ສາ" ພວກເຂົາທັງສອງກໍຢູ່ຈົນເວລາບ່າຍ ກິນຢູ່ນຳກັນອີກ [9]ເມື່ອຊາຍຄົນນັ້ນ ແລະເມຍນ້ອຍ
ກັບຄົນໃຊ້ລຸກຂຶ້ນຈະອອກເດີນທາງ ພໍ່ເຖົ້າຂອງລາວຄືພໍ່ຂອງຜູ້ຍິງກໍບອກລາວວ່າ "ເບິ່ງແມ ນີ້ກໍ
ບ່າຍໃກ້ຄໍ່າແລ້ວ ຂໍນອນຢູ່ອີກຄືນໜຶ່ງສາ ຈະໝົດມື້ຢູ່ແລ້ວ ນອນພັກຢູ່ບ່ອນນີ້ກ່ອນ ເພື່ອໃຈ
ຂອງເຈົ້າຈະເບີກບານ ມື້ອື່ນເຊົ້າຂໍເຈົ້າຕື່ນແຕ່ເຊົ້າເພື່ອອອກເດີນທາງ ເຈົ້າຈະໄດ້ໄປເຮືອນ"
[10]ແຕ່ຊາຍຄົນນັ້ນບໍ່ຍອມພັກຢູ່ອີກຄືນໜຶ່ງ ລາວຈຶ່ງລຸກຂຶ້ນອອກເດີນທາງໄປຈົນຮອດບ່ອນກົງ-
ກັນຂ້າມກັບເມືອງ ເຢບຸດ ຄື ເຢຣູຊາເລັມ ລາວມີລາສອງໂຕທີ່ມີອານ ແລະເມຍນ້ອຍກໍໄປນຳ.

[11]ເມື່ອເຂົາມາໃກ້ເມືອງ ເຢບຸດ ກໍບ່າຍຫລາຍແລ້ວ ຄົນໃຊ້ຈຶ່ງບອກນາຍຂອງຕົນວ່າ "ມາແມ
ໃຫ້ເຮົາແວະເຂົ້າໄປພັກໃນເມືອງຂອງຄົນ ເຢບຸດ ກ່ອນ ນອນຄືນໜຶ່ງຢູ່ໃນເມືອງນີ້ແຫລະ"
[12]ນາຍຂອງລາວຕອບວ່າ "ເຮົາຈະບໍ່ແວະເຂົ້າໄປໃນເມືອງຂອງຄົນຕ່າງດ້າວ ຜູ້ທີ່ບໍ່ແມ່ນຄົນອິ-

ສຣາເອນ ເຮົາຈະຜ່ານໄປຮອດເມືອງກິເບອາ” 13ລາວຈຶ່ງບອກຄົນໃຊ້ວ່າ “ມາເຖີດ ໃຫ້ເຮົາ
ເຂົ້າໄປໃກ້ບ່ອນເຫລົ່ານີ້ແຫ່ງໜຶ່ງ ແລະນອນຢູ່ທີ່ກິເບອາ ຫລືທີ່ຣາມາ” 14ພວກເຂົາຈຶ່ງເດີນ-
ທາງຜ່ານໄປ ເມື່ອມາໃກ້ກິເບອາຊຶ່ງເປັນຂອງຄົນເບັນຢາມິນ ຕາເວັນກໍຕົກແລ້ວ 15ພວກເຂົາ
ຈຶ່ງແວະເຂົ້າໄປຈະນອນຄືນໜຶ່ງທີ່ເມືອງກິເບອາ ພວກເຂົາແວະເຂົ້າໄປນັ່ງຢູ່ທີ່ຖະໜົນໃນເມືອງ
ນັ້ນ ເພາະວ່າບໍ່ມີໃຜເຊີນໃຫ້ພວກເຂົາເຂົ້າໄປນອນໃນເຮືອນ.

16ເບິ່ງແມ ມີຊາຍເຖົ້າຄົນໜຶ່ງເຂົ້າມາຈາກເຮັດນາເປັນເວລາຄ່ຳແລ້ວ ລາວເປັນຄົນແຖບພູ-
ເຂົາເອຟຣາຢິມມາອາໄສຢູ່ໃນເມືອງກິເບອາ ແຕ່ຊາວເມືອງນັ້ນເປັນຄົນເບັນຢາມິນ 17ເມື່ອ
ລາວເງີຍໜ້າຂຶ້ນເຫັນຜູ້ເດີນທາງຄົນນັ້ນນັ່ງຢູ່ທີ່ຖະໜົນໃນເມືອງ ຊາຍເຖົ້າຄົນນັ້ນກໍຖາມວ່າ
“ທ່ານຈະໄປໃສ ແລະມາຈາກໃສ” 18ຊາຍຄົນນັ້ນຈຶ່ງຕອບລາວວ່າ “ເຮົາເດີນທາງຈາກເບັດເລ-
ເຮັມໃນຢູດາ ຈະໄປທີ່ແຖບພູເຂົາເອຟຣາຢິມແຖບທີ່ໄກອອກໄປນັ້ນຊຶ່ງຂ້າພະເຈົ້າມາຈາກບ່ອນ
ນັ້ນຂ້າພະເຈົ້າໄປເບັດເລເຮັມໃນຢູດາມາ ແລະຂ້າພະເຈົ້າຈະກັບໄປພຣະວິຫານພຣະຜູ້ເປັນ-
ເຈົ້າ ບໍ່ມີໃຜເຊີນຂ້າພະເຈົ້າເຂົ້າໄປພັກໃນເຮືອນ 19ເຟືອງ ແລະອາຫານທີ່ຈະລ້ຽງລາ ພວກເຮົາ
ກໍມີພ້ອມແລ້ວ ທັງອາຫານ ແລະນ້ຳອະງຸ່ນທີ່ລ້ຽງຕົນ ທັງລ້ຽງຍິງຄົນນີ້ ແລະຊາຍໜຸ່ມທີ່ຢູ່ກັບ
ພວກຜູ້ຮັບໃຊ້ຂອງທ່ານກໍມີຢູ່ແລ້ວ ບໍ່ຂາດສິ່ງໃດເລີຍ” 20ຊາຍເຖົ້າຄົນນັ້ນຈຶ່ງເວົ້າວ່າ “ຂໍທ່ານ
ເປັນສຸກສະບາຍສາ ຖ້າທ່ານຂາດສິ່ງໃດ ຂ້າພະເຈົ້າຂໍເປັນທຸລະທັງໝົດ ຂໍແຕ່ຢ່ານອນຢູ່ຖະ-
ໜົນນີ້ເລີຍ” 21ລາວຈຶ່ງພາຊາຍຄົນນັ້ນເຂົ້າໄປໃນເຮືອນ ເອົາອາຫານໃຫ້ລາ ຕ່າງກໍລ້າງຕີນຂອງ
ຕົນ ແລະກິນອາຫານ ແລະດື່ມ.

22ເມື່ອພວກເຂົາກຳລັງເຮັດໃຫ້ຈິດໃຈເບີກບານ ເບິ່ງແມ ຊາວເມືອງນັ້ນທີ່ເປັນນັກເລງມາ
ລ້ອມເຮືອນໄວ້ ທຸບປະຕູ ຮ້ອງບອກຊາຍເຖົ້າຜູ້ເປັນເຈົ້າຂອງເຮືອນວ່າ “ສົ່ງຊາຍທີ່ເຂົ້າມາຢູ່ໃນ
ເຮືອນຂອງເຈົ້າມາໃຫ້ເຮົາຮ່ວມເພດກັບລາວ” 23ຊາຍຜູ້ເປັນເຈົ້າຂອງເຮືອນກໍອອກໄປເວົ້າກັບ
ພວກເຂົາວ່າ “ຢ່າເລີຍ ພີ່ນ້ອງຂອງຂ້າພະເຈົ້າ ຂໍຢ່າເຮັດການຮ້າຍຢ່າງນີ້ເລີຍ ເມື່ອຊາຍຄົນນີ້
ມາອາໄສຢູ່ເຮືອນຂອງຂ້າພະເຈົ້າແລ້ວ ຂໍຢ່າເຮັດສິ່ງທີ່ໂງ່ຈ້າຢ່າງນີ້ເລີຍ 24ເບິ່ງແມ ຂ້າພະເຈົ້າມີ
ລູກສາວພົມມະຈາລີຄົນໜຶ່ງ ແລະເມຍນ້ອຍຂອງລາວ ຂ້າພະເຈົ້າຈະພາອອກມາໃຫ້ທ່ານດຽວນີ້
ຈົ່ງຂົ່ມຂືນ ຫລືເຮັດຫຍັງແກ່ພວກນາງຕາມໃຈມັກສາ ແຕ່ຂໍຢ່າເຮັດສິ່ງທີ່ຊົ່ວຮ້າຍກັບຊາຍຄົນນີ້
ເລີຍ” 25ແຕ່ຄົນເຫລົ່ານັ້ນບໍ່ຍອມຟັງ ຊາຍຄົນນັ້ນຈຶ່ງຈັບເມຍນ້ອຍຂອງຕົນຊຸກນາງອອກໄປໃຫ້
ພວກເຂົາ ພວກເຂົາກໍສົມສູ່ເຮັດທາລຸນຕະຫລອດຄືນຈົນຮຸ່ງເຊົ້າ ພໍຮຸ່ງເຊົ້າ ພວກເຂົາທັງຫລາຍ
ກໍປ່ອຍນາງໄປ 26ເມື່ອຮຸ່ງແຈ້ງ ຜູ້ຍິງນັ້ນກໍກັບມາລົ້ມລົງທີ່ປະຕູເຮືອນຊຶ່ງນາຍຂອງຕົນພັກຢູ່ ຈົນ
ແຈ້ງສະຫວ່າງ 27ຮຸ່ງເຊົ້ານາຍຂອງນາງກໍລຸກຂຶ້ນເມື່ອເປີດປະຕູເຮືອນ ຈະອອກເດີນທາງ ເບິ່ງ
ແມ ຜູ້ຍິງຊຶ່ງເປັນເມຍນ້ອຍຂອງລາວກໍນອນຢູ່ທີ່ປະຕູເຮືອນ ມືຢຽດອອກໄປເຖິງທາງເຂົ້າປະຕູ
28ລາວຈຶ່ງບອກນາງວ່າ “ລຸກຂຶ້ນໄປກັນສາ” ແຕ່ກໍບໍ່ມີຄຳຕອບ ລາວຈຶ່ງເອົານາງຂຶ້ນຫລັງລາ
ຊາຍນັ້ນກໍລຸກຂຶ້ນເດີນທາງໄປເຮືອນຂອງຕົນ 29ເມື່ອຮອດເຮືອນແລ້ວ ກໍເອົາມີດຟັນສັບເມຍ
ນ້ອຍອອກເປັນທ່ອນໆພ້ອມກັບກະດູກ ສິບສອງທ່ອນນຳກັນສົ່ງໄປທົ່ວເຂດແດນອິສຣາເອນ
30ທຸກຄົນທີ່ເຫັນກໍເວົ້າວ່າ “ເລື່ອງຢ່າງນີ້ບໍ່ມີໃຜເຄີຍເຫັນຕັ້ງແຕ່ສະໄໝຄົນອິສຣາເອນຍົກທັບ

ອອກຈາກແຜ່ນດິນ ເອຢິບ ຈົນຮອດມື້ນີ້ ຈົ່ງຄຶດເບິ່ງ ແລະປຶກສາກັນເບິ່ງ ແລ້ວກໍວ່າຕໍ່ໆກັນໄປ
ສາ."

# ບົດທີ 20

## ຄົນອິສຣາເອນທັງໝົດສູ້ຮົບກັບຄົນຕະກູນເບັນຢາມິນ

1ຄົນ ອິສຣາເອນ ທັງໝົດຕັ້ງແຕ່ ດານ ເຖິງ ເບເອ-ເຊບາ ທັງແຜ່ນດິນ ກິເລອາດ ກໍອອກມາຊຸມ-
ນຸມ ໄດ້ປະຊຸມກັນເປັນໃຈດຽວກັນຕໍ່ ພຣະຜູ້ເປັນເຈົ້າ ທີ່ເມືອງ ມິດຊະປາ 2ຫົວໜ້າປະຊາຊົນທັງ
ໝົດຄືຕະກູນຄົນ ອິສຣາເອນ ທັງໝົດ ເຂົ້າມາປະກົດຕົວໃນທີ່ປະຊຸມແຫ່ງປະຊາຊົນຂອງ ພຣະເຈົ້າ
ມີທະຫານຖືດາບສີ່ແສນຄົນ 3(ເທື່ອນັ້ນຄົນ ເບັນຢາມິນ ໄດ້ຍິນວ່າຄົນ ອິສຣາເອນ ໄດ້ຂຶ້ນໄປເມືອງ
ມິດຊະປາ) ປະຊາຊົນ ອິສຣາເອນ ກ່າວວ່າ "ຂໍບອກເຮົາມາວ່າ ເລື່ອງຊົ່ວຮ້າຍນີ້ເກີດຂຶ້ນມາ
ຢ່າງໃດກັນ" 4ຄົນ ເລວີ ຊຶ່ງເປັນຜົວຂອງຍິງຜູ້ທີ່ຖືກຂ້ານັ້ນກ່າວຕອບວ່າ "ຂ້າພະເຈົ້າ ແລະເມຍ
ນ້ອຍຂອງຂ້າພະເຈົ້າມາເຖິງ ເມືອງ ກິເບອາ ຊຶ່ງເປັນຂອງຄົນ ເບັນຢາມິນ ເພື່ອຈະນອນຄືນໜຶ່ງ
ໃນ ເມືອງນັ້ນ 5ເວລາກາງຄືນຜູ້ຊາຍໃນ ເມືອງ ກິເບອາ ກໍລຸກຂຶ້ນລ້ອມເຮືອນທີ່ຂ້າພະເຈົ້າພັກຢູ່
ພວກເຂົາຈະຂ້າຂ້າພະເຈົ້າໃຫ້ຕາຍ ພວກເຂົາຂົ່ມຂືນເມຍນ້ອຍຂອງຂ້າພະເຈົ້າຈົນຕາຍ 6ຂ້າ-
ພະເຈົ້າຈຶ່ງນຳສົບເມຍນ້ອຍຂອງຂ້າພະເຈົ້າມາຟັນອອກເປັນທ່ອນໆ ສົ່ງໄປທົ່ວປະເທດທີ່ເປັນມໍ-
ລະດົກຂອງ ອິສຣາເອນ ເພາະວ່າພວກເຂົາໄດ້ເຮັດການຊົ່ວຮ້າຍ ແລະຄວາມໂງ່ຈ້າໃນ ອິສຣາ-
ເອນ 7ເບິ່ງແມ ທ່ານຜູ້ເປັນຄົນ ອິສຣາເອນ ທັງຫລາຍ ຈົ່ງໃຫ້ຄຳປຶກສາ ແລະຄວາມເຫັນ ໃນ
ບ່ອນນີ້ສາ."

8ປະຊາຊົນທຸກຄົນກໍລຸກຂຶ້ນກ່າວ ເປັນໃຈດຽວກັນວ່າ "ພວກເຮົາຈະບໍ່ກັບໄປເຕັນຂອງ ເຮົາ
ເຮົາຈະບໍ່ກັບໄປເຮືອນຂອງເຮົາ 9ແຕ່ບັດນີ້ເຮົາຈະເຮັດກັບ ກິເບອາ ດັ່ງນີ້ ເຮົາຈະຈັບສະຫລາກ
ຍົກຂຶ້ນໄປສູ້ຮົບກັບພວກເຂົາ 10ເຮົາຈະເລືອກຄົນ ອິສຣາເອນ ທຸກຕະກູນ ເລືອກເອົາສິບຄົນຈາກ
ຮ້ອຍຄົນ ຮ້ອຍຄົນຈາກ ພັນຄົນພັນຄົນຈາກ ໝື່ນຄົນ ໃຫ້ໄປຫາສະບຽງອາຫານມາໃຫ້ປະຊາ-
ຊົນເພື່ອພວກເຂົາທັງຫລາຍຈະຕອບສະໜອງບັນດາຄວາມໂງ່ຈ້າຊຶ່ງພວກ ກິເບອາ ໄດ້ເຮັດຂຶ້ນໃນ
ອິສຣາເອນ ເມື່ອພວກເຂົາທັງຫລາຍມາຮອດເມືອງ ກິເບອາ ຂອງຄົນ ເບັນຢາມິນ" 11ຄົນ ອິສຣາ-
ເອນທັງປວງກໍຮ່ວມຍົກທັບໄປຕໍ່ສູ້ເມືອງນັ້ນເປັນພັກພວກໃຈດຽວກັນ.

12ຕະກູນຄົນ ອິສຣາເອນ ກໍສົ່ງຄົນໄປທົ່ວຕະກູນຄົນ ເບັນຢາມິນ ບອກວ່າ "ເປັນຫຍັງການຊົ່ວ-
ຊ້ານີ້ຈຶ່ງເກີດຂຶ້ນມາໄດ້ໃນໝູ່ພວກທ່ານ 13ເຫດສະນັ້ນ ບັດນີ້ຈົ່ງມອບຊາຍຄົນຊົ່ວຮ້າຍທັງຫລາຍ
ນັ້ນໃນເມືອງ ກິເບອາ ມາໃຫ້ເຮົາປະຫານຊີວິດສາ ເພື່ອຈະໄດ້ກຳຈັດຄວາມຊົ່ວອອກໄປຈາກຄົນ
ອິສຣາເອນ" ແຕ່ຄົນ ເບັນຢາມິນ ບໍ່ຍອມຟັງສຽງຂອງຄົນ ອິສຣາເອນ ພີ່ນ້ອງຂອງຕົນ 14ຄົນ
ເບັນຢາມິນ ກໍອອກມາຈາກບັນດາຫົວ ເມືອງ ເຂົ້າໄປສູ່ ກິເບອາ ພ້ອມກັນ ເພື່ອຍົກທັບອອກໄປເຮັດ
ສົງຄາມກັບຄົນ ອິສຣາເອນ 15ຄາວນັ້ນ ຄົນ ເບັນຢາມິນ ລວມຈຳນວນທະຫານຖືດາບອອກຈາກ
ບັນດາຫົວ ເມືອງ ໄດ້ສອງໝື່ນຫົກພັນຄົນ ນອກຈາກຊາວເມືອງ ກິເບອາ ຊຶ່ງນັບທະຫານທີ່ຄັດ
ເລືອກແລ້ວໄດ້ເຈັດຮ້ອຍຄົນ 16ໃນຈຳນວນທັງໝົດນີ້ມີຄົນທີ່ຄັດເລືອກແລ້ວເຈັດຮ້ອຍຄົນ ຖະ-

ໜັດມືຊ້າຍທຸກຄົນ ເອົາກະຖຸນຍິງກ້ອນຫີນໃຫ້ຖືກເສັ້ນຜົມໄດ້ບໍ່ຜິດພາດ ເລີຍ [17]ຈຳນວນຄົນ ອິ-
ສຣາເອນ ທີ່ຖືດາບ ບໍ່ນັບຄົນ ເບັນຢາມິນ ໄດ້ສີ່ແສນຄົນ ຄົນເຫລົ່ານີ້ເປັນທະຫານທຸກຄົນ.

[18]ຄົນ ອິສຣາເອນ ກໍລຸກຂຶ້ນໄປຍັງພຣະວິຫານຂອງ ພຣະເຈົ້າ ແລະທູນຖາມ ພຣະເຈົ້າ ວ່າ "ຜູ້
ໃດໃນພວກຂ້ານ້ອຍທີ່ຈະຂຶ້ນໄປສູ້ຮົບກັບຄົນ ເບັນຢາມິນ ກ່ອນ" ພຣະຜູ້ເປັນເຈົ້າ ບອກວ່າ "ໃຫ້
ຢູດາ ຂຶ້ນໄປກ່ອນ" [19]ຮຸ່ງເຊົ້າ ຄົນ ອິສຣາເອນ ກໍລຸກຂຶ້ນຕັ້ງຄ້າຍຕໍ່ສູ້ເມືອງ ກິເບອາ [20]ຄົນ ອິສຣາ-
ເອນ ອອກໄປສູ້ຮົບກັບຄົນ ເບັນຢາມິນ ແລະຄົນ ອິສຣາເອນ ໄດ້ຕຽມທະຫານ ເພື່ອຕໍ່ສູ້ພວກເຂົາທີ່
ເມືອງ ກິເບອາ [21]ໃນມື້ນັ້ນ ຄົນ ເບັນຢາມິນ ອອກມາຈາກເມືອງ ກິເບອາ ຂ້າຟັນຄົນ ອິສຣາເອນ
ລົ້ມຕາຍສອງໝື່ນສອງພັນຄົນ.

[22]ແຕ່ປະຊາຊົນຄືຜູ້ຊາຍຊາວ ອິສຣາເອນ ຍັງໃຫ້ກຳລັງໃຈກັນ ແລະຈັດຕຽມທະຫານອີກເທື່ອ
ໜຶ່ງໃນບ່ອນຊຶ່ງພວກເຂົາຕຽມທະຫານໃນມື້ທຳອິດ [23](ແລະຄົນ ອິສຣາເອນ ກໍຂຶ້ນໄປຮ້ອງໄຫ້ຄ່ຳ
ຄວນຕໍ່ພຣະພັກ ພຣະຜູ້ເປັນເຈົ້າ ຈົນຮອດຕອນ ແລງ ພວກເຂົາທັງຫລາຍທູນຖາມ ພຣະຜູ້ເປັນ-
ເຈົ້າ ວ່າ "ສົມຄວນທີ່ຂ້າພຣະອົງຈະ ເຂົ້າໄປເຮັດເສິກກັບຄົນ ເບັນຢາມິນ ພີ່ນ້ອງຂອງຂ້າພຣະອົງ
ອີກຫລືບໍ່" ພຣະຜູ້ເປັນເຈົ້າ ບອກວ່າ "ໄປສູ້ພວກເຂົາສາ") [24]ຄົນ ອິສຣາເອນ ຈຶ່ງຍົກທັບເຂົ້າໄປ
ໃກ້ຄົນ ເບັນຢາມິນ ໃນມື້ທີສອງ [25]ແລະໃນມື້ທີສອງນັ້ນ ເບັນຢາມິນ ກໍຍົກທັບອອກໄປຈາກ ກິເບ-
ອາ ຂ້າຟັນຄົນ ອິສຣາເອນ ລົ້ມຕາຍອີກໜຶ່ງໝື່ນແປດພັນຄົນ ທຸກຄົນເປັນທະຫານຖືດາບ.

[26]ແລ້ວບັນດາຄົນ ອິສຣາເອນ ຄືກອງທັບທັງໝົດໄດ້ຂຶ້ນໄປທີ່ພຣະວິຫານຂອງ ພຣະເຈົ້າ ແລະ
ຮ້ອງໄຫ້ຄ່ຳຄວນພວກເຂົານັ່ງ ເຝົ້າ ພຣະຜູ້ເປັນເຈົ້າ ຢູ່ບ່ອນນັ້ນ ແລະອົດອາຫານຈົນຮອດຕອນ
ແລງຖວາຍ ເຄື່ອງ ເຜົາບູຊາ ແລະ ເຄື່ອງບູຊາເພື່ອຄວາມສາມັກຄີທຳຕໍ່ໜ້າ ພຣະຜູ້ເປັນເຈົ້າ [27]ຄົນ
ອິສຣາເອນ ຈຶ່ງທູນຖາມ ພຣະຜູ້ເປັນເຈົ້າ (ເພາະວ່າໃນສະໄໝນັ້ນ ຫີບພັນທະສັນຍາຂອງ ພຣະ-
ເຈົ້າ ຢູ່ບ່ອນນັ້ນ [28]ແລະ ຟີເນຮາດ ລູກຊາຍ ເອເລອາຊາ ຜູ້ເປັນລູກຊາຍ ອາໂຣນ ກໍຮັບໃຊ້ຢູ່ໜ້າ
ຫີບນັ້ນໃນສະໄໝນັ້ນ) ພວກເຂົາທູນຖາມວ່າ "ສົມຄວນທີ່ຂ້າພຣະອົງຈະຍັງຍົກທັບໄປສູ້ຮົບກັບ
ເບັນຢາມິນ ພີ່ນ້ອງຂອງຂ້າພຣະອົງອີກ ເທື່ອໜຶ່ງ ຫລືຄວນຈະຢຸດ" ແລະ ພຣະຜູ້ເປັນເຈົ້າ ບອກ
ວ່າ "ຈົ່ງຍົກທັບຂຶ້ນໄປ ເພາະວ່າມື້ອື່ນນີ້ເຮົາຈະມອບພວກເຂົາໄວ້ໃນມືຂອງເຈົ້າ."

[29]ດັ່ງນັ້ນ ອິສຣາເອນ ຈຶ່ງຊຸ້ມຄົນໄວ້ອ້ອມເມືອງ ກິເບອາ [30]ແລະປະຊາຊົນ ອິສຣາເອນ ກໍຂຶ້ນ
ໄປສູ້ຮົບກັບຄົນ ເບັນຢາມິນ ໃນວັນທີສາມ ແລະຈັດຕຽມທະຫານຕໍ່ສູ້ ເມືອງ ກິເບອາ ແບບຄາວ
ກ່ອນ [31]ຄົນ ເບັນຢາມິນ ກໍຍົກທັບອອກມາສູ້ຮົບກັບປະຊາຊົນ ແລ້ວຖືກຫລອກລວງໃຫ້ຫ່າງອອກ
ໄປຈາກຕົວເມືອງພວກເຂົາກໍເລີ່ມຂ້າຟັນປະຊາຊົນຄືຄາວກ່ອນ ຄືຕາມຖະໜົນຊຶ່ງເສັ້ນໜຶ່ງໄປຍັງ
ພຣະວິຫານຂອງ ພຣະເຈົ້າ ອີກເສັ້ນໜຶ່ງໄປ ກິເບອາ ແລະຢູ່ກາງທົ່ງແຈ້ງ ອິສຣາເອນ ລົ້ມຕາຍ
ປະມານສາມສິບຄົນ [32]ຄົນ ເບັນຢາມິນ ເວົ້າກັນວ່າ "ພວກເຂົາພ່າຍແພ້ເຮົາຄືຄາວກ່ອນ" ແຕ່ຄົນ
ອິສຣາເອນ ເວົ້າວ່າ "ໃຫ້ເຮົາຖອຍ ນຳພວກເຂົາອອກຫ່າງຈາກ ເມືອງ ໄປຮອດຖະໜົນຫລວງ"
[33]ຄົນ ອິສຣາເອນ ທັງໝົດກໍລຸກອອກຈາກບ່ອນຂອງຕົນເຂົ້າໄປທີ່ ບາອານ-ຕາມາ ສ່ວນຄົນ ອິ-
ສຣາເອນ ທີ່ຄອຍ ຖ້າ ຊຸ້ມ ຢູ່ ກໍ ອອກ ຈາກ ບ່ອນ ຂອງ ຕົນ ຄື ອອກ ຈາກ ທົ່ງ ຫຍ້າ ແຫ່ງ ເມືອງ ເກບາ
[34]ຈາກບັນດາຄົນ ອິສຣາເອນ ມີທະຫານທີ່ຄັດເລືອກແລ້ວໜຶ່ງໝື່ນຄົນບຸກເຂົ້າເມືອງ ກິເບອາ ຈາກ

ສົງຄາມກຳລັງດຸເດືອດ ຄົນ ເບັນຢາມິນ ບໍ່ຮູ້ວ່າເຫດຮ້າຍກຳລັງມາໃກ້ຕົນແລ້ວ 35ພຣະຜູ້ເປັນ-
ເຈົ້າ ໃຫ້ຄົນ ເບັນຢາມິນ ພ່າຍແພ້ຄົນ ອິສຣາເອນ ໃນມື້ນັ້ນ ຄົນ ອິສຣາເອນ ທຳລາຍຄົນ ເບັນຢາ-
ມິນ ສອງໝື່ນຫ້າພັນໜຶ່ງຮ້ອຍຄົນ ຄົນເຫລົ່ານີ້ເປັນທະຫານຖືດາບ 36ດັ່ງນັ້ນ ຄົນ ເບັນຢາມິນ ຈຶ່ງ
ເຫັນວ່າພວກເຂົາພ່າຍແພ້ແລ້ວ ຄົນ ອິສຣາເອນ ທຳທ່າຖອຍໜີຕໍ່ ເບັນຢາມິນ ເພາະວ່າພວກເຂົາ
ວາງໃຈຄົນທີ່ຕົນໃຫ້ຊຸ້ມຢູ່ອ້ອມເມືອງ ກິເບອາ 37ຄົນທີ່ຊຸ້ມຢູ່ກໍຮີບບຸກເຂົ້າໄປໃນເມືອງ ກິເບອາ
ທະຫານທີ່ຊຸ້ມຢູ່ນັ້ນກໍລຸກອອກມາປະຫານຊາວເມືອງນັ້ນທັງໝົດດ້ວຍຄົມດາບ 38ຄົນ ອິສຣາເອນ
ແລະຄົນທີ່ຊຸ້ມຢູ່ນັດໃຫ້ສັນຍານວ່າ ຖ້າເຫັນຄວັນກ້ອນໃຫຍ່ພຸ່ງຂຶ້ນມາຈາກໃນເມືອງ 39ກໍໃຫ້ຄົນ
ອິສຣາເອນ ຫັນກັບເຂົ້າມາຕີ ຝ່າຍ ເບັນຢາມິນ ໄດ້ເລີ້ມຂ້າຄົນ ອິສຣາເອນ ໄດ້ສາມສິບຄົນກໍເວົ້າ
ວ່າ “ພວກເຂົາຕ້ອງລົ້ມຕາຍຕໍ່ໜ້າເຮົາຄືຄາວກ່ອນແນ່ແລ້ວ” 40ແຕ່ສັນຍານເປັນຄວັນໄຟລຸກພຸ່ງ
ຂຶ້ນມາຈາກໃນເມືອງ ຄົນ ເບັນຢາມິນ ກໍຫລຽວຫລັງມາເບິ່ງ ທັງເມືອງກໍມີຄວັນພຸ່ງຂຶ້ນເຖິງທ້ອງ-
ຟ້າ 41ຄົນ ອິສຣາເອນ ກໍຫັນກັບ ຄົນ ເບັນຢາມິນ ກໍທໍ້ແທ້ ເພາະວ່າພວກເຂົາເຫັນວ່າເຫດຮ້າຍມາ
ໃກ້ຕົນແລ້ວ 42ພວກເຂົາຈຶ່ງຫັນຫລັງໃຫ້ຄົນ ອິສຣາເອນ ໜີເຂົ້າໄປທາງຖິ່ນແຫ້ງແລ້ງກັນດານ
ແຕ່ສົງຄາມຕິດຕາມພວກເຂົາໄປຢ່າງໜັກ ຄົນທີ່ອອກມາຈາກເມືອງກໍທຳລາຍພວກເຂົາ 43ພວກ
ເຂົາທັງຫລາຍລ້ອມຄົນ ເບັນຢາມິນ ແລະຂັບໄລ່ໄປແລະສາມາດຊະນະພວກເຂົາຢ່າງງ່າຍ ຈົນ
ໄປຮອດບ່ອນກົງກັນຂ້າມກັບ ເມືອງ ກິເບອາ ທາງຕາເວັນອອກ 44ຄົນ ເບັນຢາມິນ ລົ້ມຕາຍໜຶ່ງ
ໝື່ນແປດພັນຄົນ ທຸກຄົນເປັນທະຫານເກັ່ງກ້າ 45ພວກເຂົາກໍຫັນກັບໜີເຂົ້າໄປໃນຖິ່ນແຫ້ງແລ້ງ
ກັນດານຮອດຫີນ ຣິມໂມນ ຄົນ ອິສຣາເອນ ຂ້າພວກເຂົາຕາຍຕາມຖະໜົນຫລວງຫ້າພັນຄົນ
ແລະໄລ່ຕິດຕາມໄປເຖິງ ກິໂດມ ແລະຂ້າພວກເຂົາຕາຍສອງພັນຄົນ 46ຄົນ ເບັນຢາມິນ ທີ່ລົ້ມ
ຕາຍໃນມື້ນັ້ນ ເປັນທະຫານຖືດາບສອງໝື່ນຫ້າພັນຄົນ ທຸກຄົນເປັນທະຫານທີ່ເກັ່ງກ້າ 47ແຕ່ມີ
ທະຫານຫົກຮ້ອຍຄົນຫັນກັບໜີເຂົ້າໄປໃນຖິ່ນແຫ້ງແລ້ງກັນດານຮອດຫີນ ຣິມໂມນ ແລະໄປອາໄສ
ຢູ່ທີ່ຫີນ ຣິມໂມນ ສີ່ເດືອນ 48ຄົນ ອິສຣາເອນ ກໍຫັນກັບໄປສູ້ຄົນ ເບັນຢາມິນ ອີກ ແລະໄດ້ປະຫານ
ພວກເຂົາດ້ວຍຄົມດາບ ທັງຊາວເມືອງ ແລະຝູງສັດແລະບັນດາສິ່ງຂອງທີ່ພວກເຂົາເຫັນ ຫລາຍ
ກວ່ານັ້ນບັນດາເມືອງທີ່ພວກເຂົາພົບ ພວກເຂົາກໍເອົາໄຟເຜົາທັງໝົດ.

# ບົດທີ 21

## ຄົນອິສຣາເອນຫາເມຍສຳລັບຄົນເບັນຢາມິນທີ່ເຫລືອ

1ຝ່າຍຄົນ ອິສຣາເອນ ໄດ້ປະຕິຍານໄວ້ຢູ່ ມິດຊະປາ ວ່າ “ພວກເຮົາບໍ່ມີໃຜຈັກຄົນດຽວທີ່ຈະໃຫ້
ລູກສາວຂອງຕົນ ແຕ່ງງານກັບຄົນ ເບັນຢາມິນ” 2ແລະປະຊາຊົນກໍມາທີ່ພຣະວິຫານຂອງ ພຣະ-
ເຈົ້າ ນັ່ງຢູ່ຕໍ່ພຣະພັກ ພຣະເຈົ້າ ຈົນຮອດຕອນ ແລງ ພວກເຂົາທັງຫລາຍກໍຮ້ອງໄຫ້ຄໍ່າຄວນ
3ພວກເຂົາກ່າວວ່າ “ໂອ ພຣະຜູ້ເປັນເຈົ້າ ພຣະເຈົ້າ ແຫ່ງ ອິສຣາເອນ ເປັນຫຍັງເຫດການຢ່າງນີ້
ຈຶ່ງເກີດຂຶ້ນໃນ ອິສຣາເອນ ຊຶ່ງມື້ນີ້ຈະມີຄົນ ອິສຣາເອນ ຂາດໄປຕະກູນໜຶ່ງ.”

4ຢູ່ມາມື້ອື່ນເຊົ້າ ປະຊາຊົນກໍລຸກຂຶ້ນແຕ່ເຊົ້າໆ ແລະສ້າງແທ່ນບູຊາແທ່ນໜຶ່ງ ຖວາຍເຄື່ອງ
ເຜົາບູຊາ ແລະເຄື່ອງບູຊາເພື່ອຄວາມສາມັກຄີທຳ 5ແລະຄົນ ອິສຣາເອນ ກ່າວວ່າ “ຄົນໃດໃນ

ບັນດາຕະກູນຂອງ ອິສຣາເອນ ທີ່ບໍ່ໄດ້ຂຶ້ນມາປະຊຸມຕໍ່ ພຣະຜູ້ເປັນເຈົ້າ” ເພາະວ່າພວກເຂົາໄດ້
ປະຕິຍານໄວ້ຢ່າງແຂງແຮງເຖິງຜູ້ທີ່ບໍ່ໄດ້ມາປະຊຸມຕໍ່ ພຣະຜູ້ເປັນເຈົ້າ ຢູ່ ມິດຊະປາ ວ່າ “ຜູ້ນັ້ນຈະ
ຕ້ອງຕາຍ” [6]ແລະປະຊາຊົນ ອິສຣາເອນ ສົ່ງໜັງສືໄປຫາ ເບັນຢາມິນ ນ້ອງຂອງຕົນ ກ່າວວ່າ “ມື້-
ນີ້ຕະກູນໜຶ່ງຖືກຕັດຂາດຈາກ ອິສຣາເອນ ແລ້ວ [7]ເຮົາຈະເຮັດຢ່າງໃດເລື່ອງຫາເມຍໃຫ້ຄົນທີ່ຍັງ
ເຫລືອຢູ່ຝ່າຍ ເຮົາກໍໄດ້ປະຕິຍານໃນພຣະນາມ ພຣະຜູ້ເປັນເຈົ້າ ແລ້ວວ່າ ເຮົາຈະບໍ່ຍອມຍົກລູກ
ສາວຂອງເຮົາໃຫ້ເປັນເມຍຂອງພວກເຂົາ” [8]ພວກເຂົາທັງຫລາຍຖາມຂຶ້ນວ່າ “ມີຕະກູນໃດໃນ ອິ-
ສຣາເອນ ທີ່ບໍ່ໄດ້ຂຶ້ນມາເຝົ້າ ພຣະຜູ້ເປັນເຈົ້າ ທີ່ ມິດຊະປາ” ເບິ່ງແມ ບໍ່ມີຄົນໃດຈາກ ຢາເບັດ ກີ-
ເລອາດ ມາປະຊຸມທີ່ຄ້າຍ ເລີຍຈັກຄົນດຽວ [9]ເພາະວ່າເມື່ອພວກເຂົານັບຈຳນວນປະຊາຊົນຢູ່ນັ້ນ
ບໍ່ມີຊາວເມືອງ ຢາເບັດ ກີເລອາດ ຢູ່ບ່ອນນັ້ນເລີຍ [10]ດັ່ງນັ້ນ ຊຸມນຸມຊົນຈຶ່ງສົ່ງທະຫານຜູ້ກ້າຫານ
ທີ່ສຸດໜຶ່ງໝື່ນສອງພັນຄົນ ແລ້ວສັ່ງພວກເຂົາວ່າ “ຈົ່ງໄປຂ້າຊາວ ຢາເບັດ ກີເລອາດ ດ້ວຍຄົມ
ດາບ ທັງຜູ້ຍິງ ແລະພວກເດັກນ້ອຍ [11]ເຈົ້າທັງຫລາຍຈົ່ງເຮັດຢ່າງນີ້ ຄືຜູ້ຊາຍ ແລະຜູ້ຍິງທຸກ
ຄົນທີ່ໄດ້ຫລັບນອນກັບຜູ້ຊາຍແລ້ວ ຈົ່ງຂ້າໃຫ້ໝົດ” [12]ໃນໝູ່ຊາວ ຢາເບັດ-ກີເລອາດ ນັ້ນ ຫາກ
ພົບຍິງພົມມະຈາລີສີ່ຮ້ອຍຄົນ ຜູ້ທີ່ຍັງບໍ່ເຄີຍຮ່ວມຫລັບນອນກັບຊາຍໃດໆເລີຍ ຈຶ່ງພາຍິງເຫລົ່າ-
ນັ້ນມາທີ່ຄ້າຍ ຊີໂລ ຊຶ່ງຢູ່ໃນແຜ່ນດິນ ການາອານ.

[13]ຊຸມນຸມຊົນທັງໝົດກໍສົ່ງຂ່າວໄປຫາຄົນ ເບັນຢາມິນ ຊຶ່ງຢູ່ຫີນ ຣິມໂມນ ປະກາດຂ່າວສະຫງົບ
ສຸກ [14]ຄົນ ເບັນຢາມິນ ກໍກັບມາໃນຄາວນັ້ນ ແລ້ວພວກເຂົາກໍມອບຜູ້ຍິງທີ່ພວກເຂົາໄວ້ຊີວິດໃນໝູ່
ຜູ້ຍິງຂອງ ຢາເບັດ ກີເລອາດ ແຕ່ກໍບໍ່ພໍ.

[15]ປະຊາຊົນກໍສົ່ງໜັງສືໄປຫາ ເບັນຢາມິນ ເພາະວ່າ ພຣະຜູ້ເປັນເຈົ້າ ເຮັດໃຫ້ພວກເຂົາຂາດ
ໄປຈາກຕະກູນ ອິສຣາເອນ [16]ພວກຜູ້ໃຫຍ່ຂອງຊຸມນຸມຊົນນັ້ນຈຶ່ງກ່າວວ່າ “ເມື່ອພວກຜູ້ຍິງໃນ
ເບັນຢາມິນ ຖືກທຳລາຍໝົດຈັ່ງຊີ້ແລ້ວ ເຮົາຈະເຮັດຢ່າງໃດເລື່ອງຫາເມຍໃຫ້ຄົນທີ່ຍັງເຫລືອຢູ່”
[17]ພວກເຂົາທັງຫລາຍກ່າວວ່າ “ຕ້ອງມີມໍລະດົກໃຫ້ແກ່ຄົນ ເບັນຢາມິນ ທີ່ລອດຕາຍ ເພື່ອວ່າຄົນ
ຕະກູນໜຶ່ງຈະບໍ່ໄດ້ລຶບລ້າງອອກຈາກ ອິສຣາເອນ [18]ແຕ່ເຮົາຈະຍົກລູກສາວຂອງເຮົາໃຫ້ເປັນ
ເມຍພວກເຂົາກໍບໍ່ໄດ້” ເພາະວ່າຄົນ ອິສຣາເອນ ໄດ້ປະຕິຍານໄວ້ວ່າ “ຜູ້ໃດໃຫ້ຜູ້ຍິງແກ່ ເບັນຢາ-
ມິນ ເປັນເມຍ ຂໍໃຫ້ຖືກສາບແຊ່ງ” [19]ດັ່ງນັ້ນ ພວກເຂົາຈຶ່ງກ່າວວ່າ “ເບິ່ງແມ ທຸກປີມີເທດສະ-
ການຖວາຍ ພຣະຜູ້ເປັນເຈົ້າ ຢູ່ ຊີໂລ ໃນສະຖານທີ່ຊຶ່ງຢູ່ເໜືອ ເບັດເອນ ທາງທິດຕາເວັນອອກ
ຂອງຖະໜົນຂຶ້ນຈາກ ເບັດເອນ ຮອດ ເຊເຄັມ ແລະຢູ່ທາງທິດໃຕ້ຂອງ ເລໂບນາ” [20]ພວກເຂົາຈຶ່ງ
ສັ່ງຄົນ ເບັນຢາມິນ ວ່າ “ຈົ່ງໄປຊຸ້ມຢູ່ໃນສວນອະງຸ່ນ [21]ຄອຍຖ້າເຝົ້າເບິ່ງຢູ່ ແລະຖ້າລູກສາວຊາວ
ຊີໂລ ອອກມາເຕັ້ນລຳໃນພິທີເຕັ້ນລຳ ຈົ່ງອອກມາຈາກສວນອະງຸ່ນ ລັກເອົາລູກສາວຊາວ ຊີໂລ
ຄົນລະຄົນໄປເປັນເມຍຂອງຕົນ ແລ້ວໃຫ້ກັບໄປແຜ່ນດິນ ເບັນຢາມິນ [22]ຖ້າພໍ່ ຫລືພີ່ນ້ອງຂອງ
ຍິງເຫລົ່ານັ້ນມາຮ້ອງທຸກຕໍ່ເຮົາ ເຮົາຈະບອກພວກເຂົາວ່າ ‘ຂໍໂຜດຍິນຍອມ ເພາະເຫັນແກ່ເຮົາ
ສາ ໃນເວລາສົງຄາມເຮົາບໍ່ໄດ້ຜູ້ຍິງໃຫ້ພໍແກ່ທຸກຄົນ ທັງພວກທ່ານທັງຫລາຍເອງກໍບໍ່ໄດ້ໃຫ້ແກ່
ພວກເຂົາ ຖ້າບໍ່ດັ່ງນັ້ນ ບັດນີ້ພວກທ່ານກໍຈະມີໂທດ.’”

[23]ຄົນ ເບັນຢາມິນ ກໍເຮັດຕາມ ຕ່າງກໍໄດ້ເມຍໄປຕາມຈຳນວນ ຄືໄດ້ຍິງເຕັ້ນລຳທີ່ພວກເຂົາໄປ

ລັກມາ ພວກເຂົາກໍກັບໄປຢູ່ໃນທີ່ດິນມໍລະດົກຂອງພວກເຂົາ ສ້າງເມືອງຂຶ້ນໃໝ່ ແລະອາໄສຢູ່
ໃນບ່ອນນັ້ນ [24]ປະຊາຊົນ ອິສຣາເອນ ກໍກັບຈາກບ່ອນນັ້ນໄປຍັງຕະກຸນ ແລະຄອບຄົວຂອງຕົນ
ຕ່າງກໍຍົກທັບກັບໄປສູ່ດິນແດນມໍລະດົກຂອງຕົນ [25]ໃນສະໄໝນັ້ນ ບໍ່ມີກະສັດໃນ ອິສຣາເອນ
ຈຶ່ງເຮັດຕາມທີ່ຕົນເອງເຫັນດີ.

* * *

# ນາງຣຸດ

## ບົດທີ 1

### ເອລີເມເລັກກັບຄອບຄົວໄປອາໄສຢູ່ໃນປະເທດໂມອາບ

[1]ໃນຄາວທີ່ພວກຜູ້ປົກຄອງຄອບຄອງ ອິສຣາເອນ ຢູ່ນັ້ນ ໄດ້ມີການອຶດຢາກເກີດຂຶ້ນໃນປະ-
ເທດ. [2]ຈຶ່ງເປັນເຫດໃຫ້ຊາຍຄົນໜຶ່ງຊື່ວ່າ ເອລີເມເລັກ ພ້ອມກັບນາງ ນາໂອມີ ຜູ້ເປັນເມຍ ແລະ
ລູກຊາຍສອງຄົນ ຄື ມາໂລນ ແລະ ກີລີໂອນ ໜີຈາກເມືອງ ເບັດເລເຮັມ ໃນ ຢູດາ ໄປອາໄສຢູ່ໃນ
ປະເທດ ໂມອາບ ພວກເຂົາເປັນຄົນ ເອຟຣາທາ. [3]ຢູ່ຕໍ່ມາ ເອລີເມເລັກກໍຕາຍໄປ ນາງ ນາໂອມີ
ຜູ້ເປັນເມຍຈຶ່ງໃຊ້ຊີວິດຢູ່ກັບລູກຊາຍທັງສອງ. [4]ຕໍ່ມາອີກບໍ່ດົນ ລູກຊາຍທັງສອງກໍໄດ້ແຕ່ງງານ
ກັບຍິງສາວຊາວ ໂມອາບ ຄືນາງ ໂອປາ ແລະນາງ ຣຸດ ພວກເຂົາໄດ້ພາກັນຕັ້ງຖິ່ນຖານຢູ່ທີ່ນັ້ນ
ປະມານສິບປີ. [5]ແລ້ວ ມາໂລນ ກັບ ກີລີໂອນ ກໍໄດ້ຕາຍໄປອີກ ນາງ ນາໂອມີ ຈຶ່ງໃຊ້ຊີວິດຢູ່ກັບລູກ
ໃພ້ທັງສອງ.

### ນາໂອມີ ແລະນາງຣຸດກັບຄືນເມືອເມືອງເບັດເລເຮັມ

[6-7]ຄັນຕໍ່ມາ ນາງ ນາໂອມີ ກໍໄດ້ຍິນຂ່າວວ່າ ພຣະຜູ້ເປັນເຈົ້າ ໄດ້ຊົງ ໂຜດປະທານເຂົ້າປາອາ-
ຫານ ແກ່ຊາວ ເມືອງ ເບັດເລເຮັມ ນາງພ້ອມດ້ວຍລູກໃພ້ທັງສອງຈຶ່ງຕຽມຕົວອອກເດີນທາງມຸ່ງ
ໜ້າຄືນສູ່ເມືອງ ເບັດເລເຮັມ ລາຊະອານາຈັກ ຢູດາ. [8]ໃນລະຫວ່າງເດີນທາງໄປນັ້ນ ນາງ ນາໂອມີ
ໄດ້ເວົ້າກັບລູກໃພ້ທັງສອງວ່າ, “ຈົ່ງພາກັນກັບຄືນເມືອຢູ່ບ້ານພໍ່ແມ່ຂອງພວກເຈົ້າສາ ແລະຂໍໃຫ້
ພຣະເຈົ້າ ໂຜດປະທານຄວາມຜາສຸກໃຫ້ ແກ່ພວກ ເຈົ້າ ເໝືອນດັ່ງທີ່ພວກ ເຈົ້າ ເຄີຍ ເຮັດ ແກ່ແມ່
ແລະ ແກ່ຜູ້ທີ່ຕາຍໄປແລ້ວນັ້ນ. [9]ນອກນີ້ ຂໍໃຫ້ ພຣະຜູ້ເປັນເຈົ້າ ຊົງ ໂຜດປະທານຄວາມສະຫງົບ
ສຸກ ເມື່ອເວລາພວກເຈົ້າມີຄອບຄົວໃໝ່.” ຫລັງຈາກນັ້ນ ນາງ ນາໂອມີ ກໍກອດຈູບສັ່ງລາລູກໃພ້
ທັງສອງດ້ວຍຄວາມສົງສານ ພວກເຂົາທັງສອງຈຶ່ງຮ້ອງໄຫ້ດ້ວຍຄວາມອາໄລອາວອນ. [10]ພ້ອມ
ທັງໄດ້ເວົ້າກັບແມ່ຍ່າວ່າ, “ພວກລູກຈະບໍ່ເມືອ ຈະໄປຢູ່ນຳແມ່ ແລະພີ່ນ້ອງຂອງແມ່.”

[11]ນາງ ນາໂອມີ ຂໍຮ້ອງຕື່ມອີກວ່າ, “ຈົ່ງກັບຄືນເມືອບ້ານຂອງພວກລູກສາ ຢາກໄປນຳແມ່ເຮັດ
ຫຍັງ ຫລືພວກລູກຄິດວ່າ ແມ່ຍັງມີລູກຊາຍທີ່ພໍຈະໃຫ້ພວກເຈົ້າໄດ້ແຕ່ງງານນຳອີກບໍ? [12]ຈົ່ງກັບ
ເມືອເສຍ ແມ່ນີ້ເຖົ້າແກ່ກາຍຍາມຈະແຕ່ງງານໃໝ່ແລ້ວ ສົມມຸດວ່າ, [13]ແມ່ຈະແຕ່ງງານໃນຄືນນີ້
ແລ້ວມີລູກຊາຍໃໝ່ອີກ ພວກລູກກໍຈະພາກັນຢູ່ຖ້າຈົນລາວໃຫຍ່ ແລ້ວ ແຕ່ງງານກັບລາວຫລື?
ພວກລູກຈະບໍ່ແຕ່ງງານກັບຄົນອື່ນອີກບໍ? ເປັນໄປບໍ່ໄດ້ດອກ ລູກເອີຍ ແມ່ມີຄວາມສົງສານ
ພວກເຈົ້າຫລາຍ ຍ້ອນວ່າການກະທຳຂອງແມ່ອາດເປັນທີ່ບໍ່ພໍພຣະໄທ ພຣະເຈົ້າ.”

[14]ເມື່ອໄດ້ຍິນແມ່ຍ່າເວົ້າດັ່ງນັ້ນ ພວກເຂົາກໍພາກັນຮ້ອງໄຫ້ອີກ ແລ້ວນາງ ໂອປາ ໄດ້ກອດຈູບ
ຍ່າ ແລະອຳລາກັບຄືນໄປຫາພີ່ນ້ອງຂອງຕົນ ສ່ວນນາງ ຣຸດບໍ່ຍອມໜີຈາກຍ່າເດັດຂາດ. [15]ນາງ
ນາໂອມີ ຈຶ່ງເວົ້າຕໍ່ນາງ ຣຸດວ່າ, “ເບິ່ງແມ ນາງ ໂອປາກໍໄດ້ກັບຄືນໄປຫາພີ່ນ້ອງ ແລະ ພຣະເຈົ້າ
ຂອງນາງຢູ່ບ້ານ ເກົ່າ ແລ້ວ.” [16]ແຕ່ນາງ ຣຸດ ໄດ້ຕອບຍ່າວ່າ, “ຢ່າຮ້ອງຂໍໃຫ້ລູກ ເຊົາຕິດຕາມ

ແລະຈາກແມ່ຍ່າໄປທ້ອນ ແມ່ໄປທີ່ໃດລູກກໍຈະໄປທີ່ນັ້ນ ແມ່ຢູ່ບ່ອນໃດລູກກໍຂໍຢູ່ບ່ອນນັ້ນດ້ວຍ
ຍາດພີ່ນ້ອງຂອງແມ່ກໍຄືຍາດພີ່ນ້ອງຂອງລູກ. [17]ພຣະເຈົ້າຂອງແມ່ກໍແມ່ນພຣະເຈົ້າຂອງລູກ
ແມ່ຕາຍຢູ່ບ່ອນໃດ ລູກກໍຈະຕາຍຢູ່ບ່ອນນັ້ນ ແລະສົບຂອງລູກຈະຝັງຢູ່ທີ່ນັ້ນດ້ວຍ ຖ້າລູກປະ
ແມ່ໄປກ່ອນຕາຍ ຂໍໃຫ້ພຣະຜູ້ເປັນເຈົ້າຊົງລົງໂທດຢ່າງໜັກ.”
[18]ເມື່ອນາງນາໂອມີເຫັນນາງຣຸດມີຄວາມຕັ້ງໃຈໄປກັບຕົນແທ້ ນາງກໍບໍ່ເວົ້າຫຍັງອີກ.
[19]ທັງສອງໄດ້ພາກັນເດີນທາງໄປຈົນຮອດເມືອງເບັດເລເຮັມ ເມື່ອພວກນາງເຂົ້າໄປເມືອງນັ້ນ
ຊາວເມືອງກໍພາກັນຕື່ນເຕັ້ນທີ່ເຫັນນາງກັບມາ ພວກເຂົາຈຶ່ງຖາມກັນວ່າ, “ນີ້ແມ່ນນາງນາໂອມີ
ບໍ?”
[20]ນາງນາໂອມີຈຶ່ງຕອບພວກເຂົາວ່າ, “ຢ່າເອີ້ນຂ້ອຍວ່ານາງນາໂອມີອີກ ຈົ່ງເອີ້ນວ່າ ມາຣາ
ເພາະວ່າພຣະເຈົ້າຜູ້ມີອຳນາດຍິ່ງໃຫຍ່ຊົງໃຫ້ຂ້ອຍເຕັມໄປດ້ວຍຄວາມຂົມຂື່ນ. [21]ຂ້ອຍຈາກທີ່ນີ້
ໄປດ້ວຍຄວາມພ້ອມພຽງ ແຕ່ພຣະເຈົ້າໄດ້ໃຫ້ຂ້ອຍກັບມາມືເປົ່າ ຍ້ອນວ່າພຣະເຈົ້າຊົງລົງໂທດ
ຂ້ອຍ ແລະປະທານຄວາມທຸກຍາກລຳບາກໃຫ້ແກ່ຂ້ອຍ ສະນັ້ນ ເປັນຫຍັງຈຶ່ງເອີ້ນຂ້ອຍວ່າ
ນາໂອມີ ຜູ້ຊົມຊື່ນຍິນດີ?”
[22]ນາງນາໂອມີກັບນາງຣຸດ ຊາວເມືອງໂມອາບລູກໃພ້ຂອງນາງ ໄດ້ກັບມາຮອດເມືອງ
ເບັດເລເຮັມ ພໍດີກັບເວລາຕົ້ນລະດູກ່ຽວເຂົ້າ.

# ບົດທີ 2

## ນາງຣຸດເກັບຮວງເຂົ້າເຮ່ຍຢູ່ທົ່ງນາຂອງໂບອາດ

[1]ທີ່ເມືອງເບັດເລເຮັມ ນາງນາໂອມີມີພີ່ນ້ອງທາງຜົວຜູ້ໜຶ່ງຊື່ ໂບອາດ ທ່ານຜູ້ນີ້ເປັນຄົນຮັ່ງມີ
ແລະມີອິດທິພົນ. [2]ຢູ່ຕໍ່ມາ ນາງຣຸດໄດ້ເວົ້າກັບຍ່າວ່າ, “ແມ່ ລູກຂໍໄປເກັບຮວງເຂົ້າຕົກເຮ່ຍຢູ່
ຕາມທົ່ງນາ ລູກຈະເກັບຕາມຫລັງຜູ້ທີ່ອະນຸຍາດໃຫ້ເກັບ” ນາງນາໂອມີຈຶ່ງຕອບວ່າ, “ຈົ່ງໄປສາ
ລູກເອີຍ.” [3]ແລ້ວນາງກໍໄດ້ເດີນໄປທົ່ງນາຫາເກັບເອົາຮວງເຂົ້າເຮ່ຍຕາມຫລັງພວກກ່ຽວເຂົ້າໂດຍ
ບັງເອີນ ນາທີ່ນາງໄປເກັບຮວງເຂົ້ານັ້ນ ແມ່ນນາຂອງໂບອາດພີ່ນ້ອງຂອງເອລີເມເລັກ.
[4]ໃນຂະນະນັ້ນ ໂບອາດໄດ້ອອກມາແຕ່ເມືອງເບັດເລເຮັມ ເພື່ອເບິ່ງຄົນເຮັດວຽກໃນນາ ເພິ່ນ
ໄດ້ກ່າວອວຍພອນໃຫ້ພວກເຂົາວ່າ, “ຂໍພຣະເຈົ້າຊົງສະຖິດຢູ່ກັບພວກເຈົ້າເທີ້ນ” ແລ້ວພວກລູກ-
ຈ້າງກໍຕອບວ່າ, “ຂໍພຣະເຈົ້າຊົງອວຍພອນໃຫ້ທ່ານເໝືອນກັນເທີ້ນ.” [5]ແລະໂບອາດໄດ້ຖາມ
ຫົວໜ້າລູກຈ້າງວ່າ, “ຍິງຜູ້ນັ້ນແມ່ນໃຜ?” [6]ຫົວໜ້າຈຶ່ງຕອບວ່າ, “ແມ່ນຍິງທີ່ມາຈາກປະເທດໂມ-
ອາບ ນຳນາງນາໂອມີ. [7]ນາງໄດ້ມາຂໍອະນຸຍາດນຳຂ້ານ້ອຍ ເພື່ອເກັບຮ່ວງເຂົ້າທີ່ເຮ່ຍຈາກ
ພວກເກັບກ່ຽວ ດັ່ງນັ້ນ ນາງຈຶ່ງໄດ້ເກັບຕັ້ງແຕ່ເຊົ້າຈົນຮອດດຽວນີ້ ແລະໄດ້ພັກຜ່ອນແຕ່ພຽງເລັກ
ນ້ອຍເທົ່ານັ້ນ.”
[8]ເມື່ອໄດ້ຍິນເຊັ່ນນັ້ນ ໂບອາດກໍເວົ້າກັບນາງຣຸດວ່າ, “ນາງເອີຍ ເຈົ້າຢ່າໄປເກັບຮວງເຂົ້າ
ບ່ອນອື່ນເດີ້ ຈົ່ງມາເກັບແຕ່ໃນທົ່ງນານີ້ ແລະເຮັດວຽກຢູ່ນຳຄົນງານຍິງຂອງຂ້ອຍ. [9]ຈົ່ງເບິ່ງ ຖ້າ
ພວກເຂົາກ່ຽວເຂົ້າຢູ່ບ່ອນໃດ ເຈົ້າຈົ່ງໄປເກັບຢູ່ບ່ອນນັ້ນ ຂ້ອຍໄດ້ສັ່ງຫ້າມບໍ່ໃຫ້ພວກຜູ້ຊາຍລົບ

ກວນເຈົ້າ ຖ້າເຈົ້າຫິວນ້ຳ ຈົ່ງໄປກິນໃນໄຫທີ່ພວກລູກຈ້າງໄດ້ຕັກມາໄວ້ແລ້ວນັ້ນ.”
[10]ເມື່ອນາງໄດ້ຍິນເຊັ່ນນັ້ນ ນາງກໍກົ້ມຂາບລົງ ແລະເວົ້າກັບໂບອາດວ່າ, “ຂ້ານ້ອຍເປັນພຽງ
ຄົນຕ່າງດ້າວ ເປັນຫຍັງທ່ານຈຶ່ງມີຄວາມເມດຕາກະລຸນາຕໍ່ຂ້ານ້ອຍເຊັ່ນນີ້?” [11-12]ໂບອາດຈຶ່ງ
ຕອບວ່າ, “ຂ້ອຍໄດ້ຍິນເລື່ອງທີ່ເຈົ້າໄດ້ປະຕິບັດຕໍ່ຍ່າຕັ້ງແຕ່ຜົວຂອງເຈົ້າໄດ້ຕາຍໄປ ຂ້ອຍໄດ້ຮູ້
ວ່າເຈົ້າຈາກພໍ່ແມ່ ແລະບ້ານເກີດເມືອງນອນ ມາຢູ່ໃນປະເທດທີ່ເຈົ້າບໍ່ຮູ້ຈັກມາກ່ອນ ຂໍໃຫ້ພຣະ-
ເຈົ້າຊົງຕອບແທນຄຸນຄວາມດີທີ່ເຈົ້າໄດ້ປະຕິບັດມາ ຂໍໃຫ້ພຣະເຈົ້າຂອງພວກອິສຣາເອນ ຜູ້ຊຶ່ງ
ເຈົ້າໄດ້ເພິ່ງພາອາໄສ ຈົ່ງປະທານບຳເໜັດອັນປະເສີດໃຫ້ແກ່ເຈົ້າດ້ວຍ.” [13]ນາງຣຸດກໍຕອບວ່າ,
“ທ່ານດີຕໍ່ຂ້ານ້ອຍຫລາຍ ນອກນີ້ທ່ານຍັງໄດ້ເລົ້າໂລມໃຫ້ກຳລັງໃຈແກ່ຂ້ານ້ອຍ ທັງໆ ທີ່ຂ້າ-
ນ້ອຍບໍ່ມີຄຸນຄ່າ ເທົ່າທຽມກັບຄົນໃຊ້ຄົນໜຶ່ງຂອງທ່ານເລີຍ.”
[14]ເມື່ອເວລາຮັບປະທານອາຫານ ໂບອາດບອກນາງຣຸດວ່າ, “ຈົ່ງຫຍັບເຂົ້າມາເອົາເຂົ້າຈີ່
ແລ້ວເອົາອາຫານຈໍ້າແຈ່ວສົ້ມ” ນາງຣຸດຈຶ່ງຫຍັບເຂົ້າມານັ່ງນຳພວກລູກຈ້າງ ໂບອາດໄດ້ເອົາ
ອາຫານໃຫ້ນາງ ຈົນນາງກິນອີ່ມ ແລ້ວຍັງເອົາອາຫານທີ່ເຫລືອນັ້ນໃຫ້ອີກດ້ວຍ. [15]ຫລັງຈາກ
ກິນອີ່ມແລ້ວ ກ່ອນນາງຈະໄປເກັບຮວງເຂົ້າຕໍ່ ໂບອາດໄດ້ສັ່ງລູກຈ້າງອີກວ່າ, “ຈົ່ງອະນຸຍາດໃຫ້
ນາງເກັບຮວງເຂົ້າໃນບ່ອນທີ່ຍັງມີຟ່ອນເຂົ້າ ຢ່າລົບກວນນາງ. [16]ໃຫ້ພວກເຈົ້າດຶງເອົາເຂົ້າບາງ
ຮວງອອກຈາກມັດປະໄວ້ໃຫ້ນາງເກັບຕາມສະບາຍ ແລະຢ່າເວົ້າຫຍໍ້ຫຍັນຫຍັງໃຫ້ນາງເດີ້.
[17]ນາງຣຸດໄດ້ເກັບຮວງເຂົ້າໃນນາຈົນຮອດຄໍ່າ ແລ້ວຟາດເອົາເຂົ້າທີ່ເກັບມານັ້ນໄດ້ປະມານສາມ
ໝື່ນ.
[18]ຫລັງຈາກນັ້ນ ນາງກໍຖືເອົາເຂົ້າກັບຄືນເມືອບ້ານຫາຍ່າໃນເມືອງພ້ອມທັງອາຫານທີ່ໂບອາດ
ໃຫ້ມານັ້ນໃຫ້ຍ່າເບິ່ງ. [19]ນາງນາໂອມິຈຶ່ງຖາມວ່າ “ມື້ນີ້ ລູກໄດ້ໄປເກັບເຂົ້າຢູ່ບ່ອນໃດ? ແມ່ນ
ນາຂອງໃຜທີ່ລູກໄປເຮັດວຽກນຳ? ຂໍໃຫ້ພຣະເຈົ້າຊົງອວຍພອນທ່ານຜູ້ມີເມດຕາຈິດເທີ້ນ” ແລ້ວ
ນາງຣຸດໄດ້ເວົ້າໃຫ້ຍ່າຟັງວ່າ ນາງໄດ້ໄປເຮັດວຽກໃນນາຂອງຜູ້ໜຶ່ງຊື່ວ່າ ໂບອາດ. [20]ນາງນາ-
ໂອມິຈຶ່ງເວົ້າວ່າ, “ຂໍທ່ານຜູ້ນັ້ນຈົ່ງໄດ້ຮັບພຣະພອນຈາກພຣະເຈົ້າຜູ້ຊົງປະຕິບັດຕາມສັນຍາທີ່ຊົງ
ໃຫ້ໄວ້ກັບຜູ້ຍັງມີຊີວິດ ແລະຜູ້ຕາຍໄປແລ້ວ” ນາງເວົ້າຕໍ່ໄປອີກວ່າ, “ທ່ານຜູ້ນັ້ນແມ່ນຍາດພີ່-
ນ້ອງໃກ້ຊິດຂອງເຮົາ ຊຶ່ງເປັນຜູ້ໜຶ່ງທີ່ມີສິດໄຖ່ ແລະອຸປະຖຳຄ້ຳຊູພວກເຮົາ.” [21]ນາງຣຸດຍັງໄດ້
ເວົ້າກັບຍ່າອີກວ່າ, “ເພິ່ນຍັງບອກໃຫ້ລູກຢູ່ກັບ ລູກຈ້າງຂອງເພິ່ນຈົນກ່ຽວເຂົ້າແລ້ວ.” [22]ນາງ
ນາໂອມິຈຶ່ງຕອບວ່າ, “ແມ່ນແລ້ວລູກເອີຍ ເປັນການດີຖ້າລູກຢູ່ນຳລູກຈ້າງຂອງເພິ່ນ ແຕ່ຖ້າລູກ
ໄປນາຂອງຜູ້ອື່ນອາດຈະຖືກລົບກວນ.” [23]ດັ່ງນັ້ນ ນາງຣຸດຈຶ່ງຫຽວໄປເຮັດວຽກນຳລູກຈ້າງຂອງ
ໂບອາດຈົນກ່ຽວເຂົ້າແລ້ວ ແຕ່ນາງຍັງຢູ່ກັບແມ່ຍ່າຂອງນາງ.

# ບົດທີ 3

## ໂບອາດເມດຕານາງຣຸດ

[1]ຄັນຕໍ່ມາ ນາງນາໂອມິໄດ້ກ່າວຕໍ່ນາງຣຸດລູກໃພ້ຂອງຕົນວ່າ, “ລູກເອີຍ ແມ່ຄວນຈະຊອກ
ຫາຜົວໃຫ້ເຈົ້າ ເພື່ອຈະມີຄອບຄົວໃໝ່ອີກ. [2]ເຈົ້າຈົ່ງຮູ້ໄວ້ວ່າ ໂບອາດນາຍຂອງພວກສາວໃຊ້ທີ່

ເຈົ້າໄດ້ໄປເຮັດວຽກນຳນັ້ນ ເປັນພີ່ນ້ອງຜູ້ໜຶ່ງຂອງພວກເຮົາ ລູກຈົ່ງຟັງໃຫ້ດີ ໃນມື້ແລງນີ້ ເພິ່ນ
ຈະໄປຟາດເຂົ້າໃນລານ. 3ດັ່ງນັ້ນ ເຈົ້າຈົ່ງອາບນ້ຳ ທານ້ຳມັນ ແຕ່ງເນື້ອແຕ່ງຕົວແລະນຸ່ງເຄື່ອງ
ອັນງາມທີ່ສຸດ ແລ້ວລົງໄປໃນນາບ່ອນທີ່ເພິ່ນຟາດເຂົ້ານັ້ນ ແຕ່ຢ່າໃຫ້ເພິ່ນຮູ້ຈັກວ່າເຈົ້າຢູ່ທີ່ນັ້ນ ຈົນ
ກວ່າເພິ່ນຮັບປະທານອາຫານ ແລະດື່ມອີ່ມແລ້ວ. 4ເມື່ອເພິ່ນໄປນອນ ໃຫ້ເຈົ້າຈື່ບ່ອນເພິ່ນນອນ
ໄວ້ ແລ້ວໃຫ້ເຈົ້າຄ່ອຍໆ ເຂົ້າໄປເປີດຜ້າຫົ່ມທີ່ຕີນເພິ່ນອອກແລ້ວນອນລົງ ໃນເວລານັ້ນ ເພິ່ນ
ຈະເວົ້າກັບເຈົ້າໃນສິ່ງທີ່ເຈົ້າຄວນຈະເຮັດ.” 5ນາງຣຸດໄດ້ຕອບຍ່າວ່າ, “ລູກຈະເຮັດຕາມທີ່ຍ່າ
ບອກ.”

6ແລ້ວນາງຣຸດກໍລົງໄປໃນລານເຂົ້າ ແລະເຮັດຕາມທີ່ຍ່າໄດ້ບອກໄວ້ທຸກປະການ. 7ຫລັງຈາກ
ໂບອາດໄດ້ກິນ ແລະດື່ມອີ່ມໜຳສຳລານໃຈແລ້ວ ເພິ່ນກໍໄດ້ໄປນອນພັກຜ່ອນຢູ່ໃກ້ໆ ກອງຟ່ອນ
ເຂົ້າ ນາງຣຸດຈຶ່ງຄ່ອຍໆ ຫຍັບເຂົ້າໄປເປີດຜ້າຫົ່ມຢູ່ຕີນເພິ່ນອອກ ແລ້ວຄ່ອຍໆ ນອນລົງ.
8ເມື່ອໂບອາດຮູ້ເມື່ອຂຶ້ນໃນເວລາກາງຄືນ ກໍຮູ້ສຶກປະຫລາດໃຈທີ່ເຫັນຜູ້ຍິງມານອນຢູ່ກ້ອງຕີນ
ຂອງຕົນ ເພິ່ນຈຶ່ງຖາມຂຶ້ນວ່າ, “ເຈົ້າແມ່ນໃຜ?” 9ນາງຣຸດກໍຕອບວ່າ, “ຂ້ານ້ອຍແມ່ນຣຸດ ສາວ
ໃຊ້ຂອງທ່ານ ຂໍໃຫ້ທ່ານປົກປັກຮັກສາເບິ່ງແຍງຂ້ານ້ອຍແດ່ທ້ອນ ເພາະທ່ານເປັນພີ່ນ້ອງໃກ້ຊິດ
ມີສິດທີໄຖ່ ແລະອຸປະຖຳຄ້ຳຊູຂ້ານ້ອຍ.” 10ໂບອາດໄດ້ເວົ້າວ່າ, “ຂໍໃຫ້ພຣະເຈົ້າອວຍພອນເຈົ້າ
ການກະທຳຂອງເຈົ້າຄັ້ງນີ້ເປັນທີ່ໜ້າສັງສານກວ່າຄາວກ່ອນ ຊຶ່ງຊີ້ໃຫ້ເຫັນຄວາມສັດຊື່ທີ່ເຈົ້າມີຕໍ່
ຄອບຄົວ ແລະຕໍ່ຍ່າຂອງເຈົ້າ ໂດຍບໍ່ໄດ້ໄປຫຍຸ້ງກ່ຽວກັບຜູ້ບ່າວຄົນອື່ນທີ່ຮັ່ງມີ ຫລືຍາກຈົນ.
11ບັດນີ້ ເຈົ້າບໍ່ຕ້ອງຢ້ານ ຂ້ອຍຈະເຮັດຕາມທີ່ເຈົ້າເວົ້ານັ້ນທຸກຢ່າງ ເພາະທຸກໆ ຄົນໃນເມືອງນີ້
ກໍຮູ້ແລ້ວວ່າເຈົ້າເປັນຍິງດີ. 12ແມ່ນຄວາມຈິງແທ້ທີ່ວ່າຂ້ອຍເປັນຜູ້ໜຶ່ງທີ່ມີສິດໄຖ່ເຈົ້າ ແຕ່ຍັງມີພີ່-
ນ້ອງທີ່ໃກ້ຊິດກວ່າຂ້ອຍອີກຜູ້ໜຶ່ງທີ່ມີສິດໄຖ່ເຈົ້າກ່ອນ. 13ເຈົ້າຈົ່ງນອນຢູ່ທີ່ນີ້ກ່ອນ ແລ້ວມື້ອື່ນ
ເຊົ້າຖ້າຜູ້ນັ້ນຫາກຮັບໄຖ່ເຈົ້າ ກໍຈົ່ງໃຫ້ເພິ່ນເຮັດໄດ້ ແຕ່ຖ້າເພິ່ນປະຕິເສດ ຂ້ອຍຂໍສາບານຕໍ່
ພຣະເຈົ້າຜູ້ຊົງມີຊີວິດຢູ່ວ່າ ຂ້ອຍຈະຮັບຜິດຊອບໃນເລື່ອງນີ້ເອງ ເຈົ້າຈົ່ງຫລັບໃຫ້ສະບາຍໃຈ
ເທີ້ນ” ຄືນນັ້ນນາງໄດ້ນອນກ້ອງຕີນຂອງໂບອາດຈົນຂ້ອນແຈ້ງ. 14ແຕ່ນາງໄດ້ລຸກກ່ອນຄົນຈະ
ເຫັນໜ້າ ໂບອາດຈຶ່ງເວົ້າວ່າ, “ບໍ່ມີຜູ້ໃດຮູ້ວ່ານາງມາທີ່ນີ້ດອກ.”

15ຄັນແລ້ວ ໂບອາດໄດ້ເວົ້າຕໍ່ນາງວ່າ, “ຈົ່ງເອົາເສື້ອຊັ້ນນອກທີ່ເຈົ້ານຸ່ງນັ້ນພືອອກ” ນາງຣຸດ
ກໍເຮັດຕາມ ໂບອາດຈຶ່ງຜອງເຂົ້າໃຫ້ນາງສາມກະລຸມ ນາງໄດ້ແບກເອົາເຂົ້າແລ້ວກັບຄືນເມືອ
ເຮືອນ. 16ເມື່ອນາງກັບມາຮອດເຮືອນ ຍ່າກໍຖາມວ່າ, “ເປັນແນວໃດລູກ?” ນາງຣຸດກໍເລົ່າເລື່ອງ
ທຸກຢ່າງທີ່ໂບອາດໄດ້ເວົ້າແລະໄດ້ເຮັດຕໍ່ນາງສູ່ຍ່າຟັງ. 17ນາງໄດ້ເວົ້າວ່າ, “ເພິ່ນຍັງໄດ້ເອົາເຂົ້າ
ສາມກະລຸມນີ້ໃຫ້ ເພາະເພິ່ນບໍ່ຢາກໃຫ້ລູກກັບມາມືເປົ່າ.” 18ນາງນາໂອມີຈຶ່ງເວົ້າວ່າ, “ລູກຈົ່ງ
ສະບາຍໃຈເທີ້ນ ຕົກມາຮອດນີ້ ລູກກໍຄົງຈະຮູ້ແລ້ວວ່າ ເລື່ອງມັນຈະຈົບລົງແນວໃດ ເພາະໂບ-
ອາດຄົງຈະບໍ່ສະບາຍໃຈ ຖ້າບໍ່ໄດ້ຈັດການກັບເລື່ອງນີ້ໃຫ້ຮຽບຮ້ອຍໃນມື້ນີ້.”

# ບົດທີ 4

## ໂບອາດເອົາຣຸດເປັນເມຍ

[1]ໂບອາດ ໄດ້ໄປນັ່ງຢູ່ໃນບ່ອນປະຊຸມທີ່ປະຕູເຂົ້າເມືອງ ໃນຂະນະນັ້ນພໍດີກັບພີ່ນ້ອງຜູ້ໃກ້ຊິດ
ກັບ ເອລີເມເລັກ ຜູ້ມີສິດໄຖ່ ແລະອຸປະຖຳຄ້ຳຊູທີ່ເພິ່ນກ່າວເຖິງນັ້ນຍ່າງຜ່ານມາ ໂບອາດ ຈຶ່ງຖື
ໂອກາດ ເຊື້ອເຊີນ ເພິ່ນນັ່ງລົງ. [2]ນອກນີ້ ເພິ່ນຍັງໄດ້ເຊື້ອເຊີນພວກເຖົ້າແກ່ໃນເມືອງສິບຄົນມາ
ຮ່ວມດ້ວຍ ເມື່ອມາພ້ອມພຽງກັນແລ້ວ. [3]ໂບອາດ ຈຶ່ງເວົ້າກັບພີ່ນ້ອງຂອງ ເອລີເມເລັກ ວ່າ, “ບັດນີ້
ນາງ ນາໂອມີ ໄດ້ມາແຕ່ປະເທດ ໂມອາບ ມາຮອດບ້ານເກີດເມືອງນອນແລ້ວ ນາງຕ້ອງການຂາຍ
ດິນຂອງ ເອລີເມເລັກ ຜູ້ເປັນຍາດພີ່ນ້ອງຂອງພວກເຮົາ. [4]ຂ້ອຍໄດ້ຕັດສິນໃຈຄັກແນ່ແລ້ວທີ່ຈະ
ເວົ້າເລື່ອງນີ້ກັບເຈົ້າ ຄືວ່າຖ້າເຈົ້າຕ້ອງການຢາກຊິດຊ່ອຍຍົກຊື່ສຽງຂອງຜູ້ຕາຍໄປແລ້ວ ຈົ່ງຕັດ-
ສິນໃຈຊື້ດິນນີ້ເສຍຕໍ່ໜ້າພວກເຖົ້າແກ່ທີ່ນັ່ງຢູ່ທີ່ນີ້ ເພື່ອເປັນພະຍານຫລັກຖານໃຫ້ແຕ່ຖ້າເຈົ້າບໍ່
ຕ້ອງການຈົ່ງບອກໃຫ້ຂ້ອຍຮູ້ ເພາະວ່າສິດທິໃນການຊື້ນັ້ນເປັນຂອງເຈົ້າກ່ອນ ແລ້ວຈຶ່ງເປັນຂອງ
ຂ້ອຍຕາມຫລັງ” ຊາຍຜູ້ນັ້ນໄດ້ ເວົ້າຂຶ້ນວ່າ, “ຂ້ອຍຍິນດີຈະຊື້ດິນນັ້ນ.” [5]ໂບອາດ ຈຶ່ງເວົ້າຂຶ້ນວ່າ,
“ຖ້າເຈົ້າຊື້ດິນຈາກນາງ ນາໂອມີ ນາງ ຣຸດ ຊຶ່ງເປັນແມ່ໝ້າຍຕ້ອງເປັນເມຍຂອງເຈົ້າ ແລະດິນທີ່
ເຈົ້າຈະຊື້ຕ້ອງຕົກເປັນຂອງຄອບຄົວຂອງຜູ້ທີ່ຕາຍແລ້ວນັ້ນ.” [6]ຊາຍຜູ້ນັ້ນກໍຕອບວ່າ, “ຖ້າເປັນ
ຢ່າງນີ້ ຂ້ອຍກໍບໍ່ສາມາດຈະຊື້ໄດ້ ເພາະການຊື້ນັ້ນອາດຈະເຮັດໃຫ້ມໍລະດົກຂອງຂ້ອຍເອງສູນ
ເສຍໄປ ເຈົ້າຈົ່ງໃຊ້ສິດທິຂອງຂ້ອຍຊື້ດິນນັ້ນເສຍເທີ້ນ ຂ້ອຍບໍ່ຕ້ອງການອີກແລ້ວ.” [7]ໃນສະໄໝ
ກ່ອນ ລາຊະອານາຈັກ ອິສຣາເອນ ມີທຳນຽມຢູ່ວ່າ ເມື່ອຜູ້ໜຶ່ງມອບສິດທິໃຫ້ຜູ້ໜຶ່ງອີກ ຫລືແລກ-
ປ່ຽນຊື້ຂາຍກັນ ຜູ້ຂາຍຕ້ອງປົດເກີບສົ່ງໃຫ້ຜູ້ຊື້ ການກະທຳເຊັ່ນນີ້ ໃຊ້ເປັນພະຍານຫລັກຖານທີ່
ນິຍົມກັນໃນ ລາຊະອານາຈັກ ອິສຣາເອນ. [8]ດັ່ງນັ້ນ ຍາດພີ່ນ້ອງຂອງ ເອລີເມເລັກ ຜູ້ມີສິດທິໃນ
ການໄຖ່ຈຶ່ງ ເວົ້າວ່າ, “ເຈົ້າຈົ່ງຊື້ສິ່ງ ເຫລົ່ານີ້ເສຍເທີ້ນ” ແລ້ວເພິ່ນກໍປົດ ເກີບໃຫ້ແກ່ ໂບອາດ.
[9]ໂບອາດ ຈຶ່ງກ່າວກັບພວກເຖົ້າແກ່ ແລະພວກທີ່ມາຮ່ວມໃນພິທີນັ້ນວ່າ, “ມື້ນີ້ ທ່ານທັງຫລາຍຈົ່ງ
ເປັນພະຍານໃຫ້ແກ່ຂ້າພະເຈົ້າດ້ວຍວ່າ ຂ້າພະເຈົ້າໄດ້ຊື້ທຸກສິ່ງທຸກຢ່າງຂອງ ເອລີເມເລັກ ຂອງ
ກິລີໂອນ ແລະຂອງ ມາໂລນ ຈາກນາງ ນາໂອມີ ແລ້ວ. [10]ນອກນີ້ ນາງ ຣຸດ ຊາວ ໂມອາບ ເມຍ
ຂອງ ມາໂລນ ຜູ້ທີ່ຕາຍໄປແລ້ວ ກໍຕົກເປັນເມຍຂອງຂ້າພະເຈົ້າດ້ວຍ ຂ້າພະເຈົ້າຢາກໃຫ້ມໍລະດົກ
ຍັງມີຢູ່ໃນຄອບຄົວຂອງຜູ້ທີ່ຕາຍ ເພື່ອໃຫ້ຊື່ຂອງລາວຍັງມີຢູ່ໃນຖ້າມກາງພວກພີ່ນ້ອງ ແລະບ້ານ
ເມືອງ ຂໍໃຫ້ພວກທ່ານຈົ່ງເປັນພະຍານຕໍ່ເຫດການໃນມື້ນີ້ດ້ວຍ.” [11]ພວກປະຊາຊົນທີ່ຢູ່ໃນທີ່ນັ້ນ
ກໍພ້ອມກັນຕອບວ່າ, “ພວກເຮົາຍິນດີເປັນພະຍານໃຫ້.” ຝ່າຍພວກເຖົ້າແກ່ກໍເວົ້າວ່າ, “ຂໍໃຫ້
ພຣະຜູ້ເປັນເຈົ້າ ຊົງ ໂຜດ ຊ່ອຍ ໃຫ້ຍິງທີ່ ຈະ ໄປຢູ່ບ້ານ ຂອງ ເຈົ້ານັ້ນ ເປັນ ເໝືອນ ນາງ ຣາເຄນ
ແລະນາງ ເລອາ ຜູ້ຊຶ່ງມີລູກຫລານຫລາຍສືບເຊື້ອສາຍໃຫ້ແກ່ລາຊະອານາຈັກ ອິສຣາເອນ ຂໍໃຫ້
ເຈົ້າເປັນຜູ້ຮັ່ງມີໃນ ເອຟຣາທາ ແລະມີຊື່ສຽງ ໂດ່ງດັງ ໃນເມືອງ ເບັດເລເຮັມ ເທີ້ນ. [12]ຂໍໃຫ້ເດັກ-
ນ້ອຍຜູ້ທີ່ ພຣະຜູ້ເປັນເຈົ້າ ໂຜດປະທານໃຫ້ເຈົ້າຈາກຍິງສາວຄົນນີ້ ຈົ່ງເປັນເໝືອນຄອບຄົວຂອງ
ເປເຣັດ ລູກຊາຍຂອງຢູດາ ແລະນາງ ຕາມາ ເທີ້ນ.”

[13]ແລ້ວ ໂບອາດ ກໍເອົານາງ ຣຸດ ມາເປັນເມຍ ແລະສົມສູ່ຢູ່ກິນດ້ວຍກັນ. [14-15]ຕໍ່ມາ ພຣະເຈົ້າ

ໄດ້ຊົງໂຜດໃຫ້ນາງຖືພາ ແລະໄດ້ລູກຊາຍຜູ້ໜຶ່ງ ຜູ້ຍິງທັງຫລາຍໃນເມືອງເບັດເລເຮັມຈຶ່ງເວົ້າ
ກັບນາງ ນາໂອມີ ວ່າ, “ຈົ່ງຂອບພຣະຄຸນ ພຣະຜູ້ເປັນເຈົ້າ ສາ ເພາະພຣະອົງຊົງ ໂຜດໃຫ້ເຈົ້າມີ
ຫລານຊາຍ ຜູ້ຈະບົວລະບັດເຈົ້າ ຂໍໃຫ້ເດັກນ້ອຍຜູ້ນີ້ມີຊື່ສຽງໂດ່ງດັງໃນລາຊະອານາຈັກອິສຣາ-
ເອນ ເປັນກຳລັງໃຈ ແລະເປັນຜູ້ຄຸ້ມຄອງຮັກສາເຈົ້າໃນເວລາເຖົ້າແກ່ ລູກໃພ້ຜູ້ເປັນແມ່ຂອງ
ເດັກນ້ອຍນີ້ຮັກເຈົ້າຫລາຍ ນາງສາມາດບົວລະບັດເຈົ້າໄດ້ດີກວ່າລູກຊາຍເຈັດຄົນຂອງເຈົ້າ.”
16ນາງ ນາໂອມີໄດ້ເອົາໃຈ ໃສ່ເບິ່ງແຍງ ແລະລ້ຽງຫລານຊາຍຜູ້ນີ້ເປັນຢ່າງດີ. 17ພວກຜູ້ຍິງບ້ານ
ໃກ້ເຮືອນຄຽງໄດ້ຕັ້ງຊື່ໃຫ້ເດັກນ້ອຍຜູ້ນັ້ນວ່າ, “ໂອເບັດ ພວກເຂົາພາກັນເວົ້າວ່າ, “ເດັກນ້ອຍນີ້
ແມ່ນລູກນາງ ນາໂອມີ” ຕໍ່ມາ ໂອເບັດໄດ້ເປັນພໍ່ຂອງ ເຢຊີ ແລະ ເຢຊີໄດ້ເປັນພໍ່ຂອງ ດາວິດ.

## ບັນພະບູລຸດຂອງດາວິດ

18ເຊື້ອສາຍຂອງ ເປເຣັດ ນັບຕັ້ງແຕ່ ເປເຣັດ ມາມີດັ່ງນີ້: ເປເຣັດ ເປັນພໍ່ ເຮດຊະໂຣນ,
19-21ເຮດຊະໂຣນ ເປັນພໍ່ຂອງ ຣາມ ຣາມ ເປັນພໍ່ຂອງ ອຳມີນາດາບ ອຳມີນາດາບ ເປັນພໍ່ ນາໂຊນ
ນາໂຊນ ເປັນພໍ່ຊານໂມນ ຊານໂມນ ເປັນພໍ່ ໂບອາດ. 22ໂບອາດ ເປັນພໍ່ ໂອເບັດ ໂອເບັດ ເປັນພໍ່
ເຢຊີ ແລະ ເຢຊີ ເປັນພໍ່ຂອງ ດາວິດ.

* * *

# ຊາມູເອນ ສະບັບຕົ້ນ

## ບົດທີ 1

### ເອນການາ ແລະຄອບຄົວທີ່ຊີໂລ

1ມີຊາຍຄົນໜຶ່ງຊື່ວ່າ ເອນການາ ເປັນຄົນຕະກູນ ເອຟຣາຢິມ ລາວຢູ່ເມືອງ ຣາມາທາຢິມ-
ໂຊຟີມ ເທິງພູນ້ອຍ ເອຟຣາຢິມ ລາວເປັນລູກຊາຍຂອງ ເຢໂຣຣາມ ເຢໂຣຣາມ ເປັນລູກຂອງ
ເອລີຮູ ຫລານຂອງ ໂຕຮູ ແລະເຫລັນຂອງ ຊູບ. 2ເອນການາມີເມຍສອງຄົນຄື ນາງ ຮັນນາ
ແລະນາງ ເປນິນນາ ເປນິນນາມີລູກ ແຕ່ຮັນນາບໍ່ມີລູກ.

3ທຸກໆ ປີໃດ ເອນການາ ໄດ້ອອກຈາກເຮືອນຂອງຕົນຂຶ້ນໄປນະມັດສະການຖວາຍເຄື່ອງ
ບູຊາແດ່ພຣະຜູ້ເປັນເຈົ້າ ແຫ່ງຈັກກະວານ ທີ່ເມືອງຊີໂລ ຢູ່ບ່ອນນີ້ແມ່ນ ໂຮບນີ ແລະ ຟີເນຮາດ
ລູກຊາຍທັງສອງຂອງ ເອລີ ເປັນປະໂລຫິດບົວລະບັດ ພຣະຜູ້ເປັນເຈົ້າ. 4ທຸກໆ ເທື່ອທີ່ ເອນກາ-
ນາຖວາຍເຄື່ອງບູຊາ ລາວຈະຕ້ອງແບ່ງຂອງຖວາຍນີ້ໃຫ້ ເປນິນນາ ແລະລູກຂອງນາງແຕ່ລະ-
ຄົນ. 5ສຳລັບ ຮັນນານັ້ນ ລາວໄດ້ແບ່ງສ່ວນທີ່ດີກວ່າໝູ່ໃຫ້ແກ່ນາງ ເຖິງແມ່ນວ່າ ພຣະຜູ້ເປັນ-
ເຈົ້າບໍ່ຊົງອະນຸຍາດ ໃຫ້ນາງມີລູກກໍຕາມ ແຕ່ ເອນການາ ກໍຮັກນາງຫລາຍທີ່ສຸດ. 6ຍ້ອນວ່າ
ພຣະຜູ້ເປັນເຈົ້າບໍ່ຊົງໃຫ້ນາງມີລູກ ຄູ່ແຂ່ງຂອງນາງຄື ເປນິນນາ ໄດ້ເຮັດໃຫ້ນາງທົນທຸກທໍລະ-
ມານ ອັບອາຍຂາຍໜ້າ ແລະຊຸ້ນເຄືອງໃຈຢູ່ເລື້ອຍ. 7ເຫດການຢ່າງນີ້ເກີດຂຶ້ນທຸກໆປີຍາມພວກ
ເຂົາພາກັນຂຶ້ນໄປພຣະວິຫານຂອງ ພຣະຜູ້ເປັນເຈົ້າ ເປນິນນາກໍເຮັດໃຫ້ຮັນນາ ເສົ້າໂສກເສຍໃຈ
ນາງຈຶ່ງຮ້ອງໄຫ້ ແລະບໍ່ຍອມກິນຫຍັງ. 8ເອນການາຜູ້ເປັນຜົວຈຶ່ງຖາມວ່າ, “ຮັນນາ ເປັນຫຍັງ
ເຈົ້າຈຶ່ງຮ້ອງໄຫ້ ແລະບໍ່ຍອມກິນເຂົ້າກິນນໍ້າ” ເປັນຫຍັງເຈົ້າຈຶ່ງ ໂສກເສົ້າຢູ່ເລື້ອຍ? ຂ້ອຍບໍ່ມີ
ຄວາມໝາຍເທົ່າກັບມີລູກສິບຄົນຊັ້ນບໍ?

### ຮັນນາ ແລະ ເອລີ

9ມີເທື່ອໜຶ່ງທີ່ຊີໂລ ຫລັງຈາກພວກເຂົາກິນເຂົ້າແລ້ວ ນາງ ຮັນນາກໍລຸກຂຶ້ນໃກ້ປະຕູພຣະວິ-
ຫານຂອງ ພຣະຜູ້ເປັນເຈົ້າ ປະໂລຫິດ ເອລີກໍນັ່ງຢູ່ເທິງຕັ່ງອີ້. 10ຮັນນາຮູ້ສຶກຂົມຂື່ນໃນໃຈຫລາຍ
ໃນຂະນະທີ່ນາງອ້ອນວອນຫາ ພຣະຜູ້ເປັນເຈົ້າ ນາງໄດ້ຮ້ອງໄຫ້ດ້ວຍຄວາມທຸກໃຈ. 11ນາງໄດ້
ສາບານຢ່າງໜັກແໜ້ນວ່າ, “ພຣະຜູ້ເປັນເຈົ້າ ແຫ່ງຈັກກະວານ ຂໍພຣະອົງຊົງທອດພຣະເນດເບິ່ງ
ຂ້ານ້ອຍຜູ້ຮັບໃຊ້ຂອງພຣະອົງແດ່ ຂໍຊົງທອດພຣະເນດເບິ່ງຄວາມໂສກເສົ້າຂອງຂ້ານ້ອຍແລະຂໍ
ຊົງຈົດຈຳ ຢ່າຫລົງລືມຂ້ານ້ອຍ ຖ້າວ່າ ພຣະອົງຊົງປະທານລູກຊາຍໃຫ້ຂ້ານ້ອຍ ຂ້ານ້ອຍຂໍ
ສັນຍາວ່າ ຈະອຸທິດຖວາຍເດັກນັ້ນ ໃຫ້ແກ່ພຣະອົງຕະຫລອດຊົ່ວຊີວິດຂອງລາວ ແລະຜົມຂອງ
ລາວຈະບໍ່ຖືກຕັດຈັກເທື່ອ.

12ນາງ ຮັນນາ ໄດ້ອ້ອນວອນຫາ ພຣະຜູ້ເປັນເຈົ້າ ເປັນເວລາດົນນານ ນາງອ້ອນວອນບໍ່ອອກ-
ສຽງ ແຕ່ເຫັນສົບຂອງນາງເໜັງຕີງ. 13ເມື່ອ ເອລີ ສັງເກດເຫັນຈຶ່ງຄິດວ່ານາງເມົາເຫລົ້າ. 14ເພິ່ນ
ເວົ້າຕໍ່ນາງວ່າ, “ຈົ່ງຢຸດຕິການເມົາເຫລົ້າ ແລະຢັບຢັ້ງສະຕິໄວ້ສາ.”

15ນາງຕອບຂຶ້ນວ່າ, “ບໍ່ແມ່ນດອກ ຂ້ານ້ອຍບໍ່ໄດ້ເມົາເຫລົ້າ ແລະບໍ່ໄດ້ດື່ມເຫລົ້າ ແຕ່ຂ້າ-
ນ້ອຍໝົດຄວາມຫວັງ ຂ້ານ້ອຍຈຶ່ງອ້ອນວອນລະບາຍຄວາມໂສກເສົ້າຂອງຂ້ານ້ອຍອອກໃຫ້
ພຣະຜູ້ເປັນເຈົ້າຟັງ. 16ຂໍທ່ານຢ່າຄິດວ່າຂ້ານ້ອຍເປັນຍິງທີ່ບໍ່ມີຄຸນຄ່າເລີຍ ຂ້ານ້ອຍອ້ອນວອນຢູ່
ຢ່າງນີ້ກໍເພາະວ່າ ຂ້ານ້ອຍຕົກຢູ່ໃນຄວາມຍາກລຳບາກ ແລະຄວາມທຸກເສົ້າໂສກໝອງໃຈ.”
17ເອລີເວົ້າວ່າ, “ຈົ່ງໄປເປັນສຸກເທີ້ນ ຂໍພຣະເຈົ້າຂອງພວກອິສຣາເອນປະທານພອນຕາມທີ່
ເຈົ້າໄດ້ຮ້ອງຂໍຕໍ່ພຣະອົງ.” 18ນາງຕອບວ່າ, “ຂໍທ່ານຈົ່ງຄິດເມດຕາປານີຂ້ານ້ອຍເລື້ອຍ” ແລ້ວ
ນາງກໍຈາກໄປ ຕໍ່ຈາກນັ້ນມາ ນາງຈຶ່ງກິນເຂົ້າ ແລະຄວາມໂສກເສົ້າກໍບັນເທົາລົງ.

## ຊາມູເອນເກີດ ແລະ ຖືກອຸທິດຖວາຍຕົວ

19ເຊົ້າມື້ໃໝ່ມາ ເອນການາພ້ອມທັງຄອບຄົວກໍພາກັນໄປນະມັດສະການພຣະຜູ້ເປັນເຈົ້າແຕ່
ເຊົ້າໆ ແລ້ວກໍພາກັນຄືນມາຍັງເມືອງຣາມາ ເມື່ອເອນການາໄດ້ສົມສູ່ຢູ່ຮ່ວມກັບນາງຮັນນາຜູ້
ເປັນເມຍ ພຣະຜູ້ເປັນເຈົ້າກໍຊົງຕອບສະໜອງຄຳອ້ອນວອນຂອງນາງ. 20ດັ່ງນັ້ນ ນາງຈຶ່ງຖືພາ
ແລະເກີດລູກຊາຍຜູ້ໜຶ່ງ ນາງຕັ້ງຊື່ລູກຊາຍວ່າ ຊາມູເອນ ເພາະວ່ານາງໄດ້ຂໍເດັກຄົນນີ້ມາຈາກ
ພຣະຜູ້ເປັນເຈົ້າ.
21ຕໍ່ມາ ເອນການາ ແລະຄອບຄົວກໍພາກັນໄປເມືອງຊີໂລ ເພື່ອຂຶ້ນໄປຖວາຍເຄື່ອງບູຊາປະ-
ຈຳປີ ແລະຖວາຍເຄື່ອງບູຊາພິເສດແກ່ພຣະຜູ້ເປັນເຈົ້າຕາມທີ່ໄດ້ສັນຍາໄວ້. 22ແຕ່ຮັນນາບໍ່ໄດ້
ໄປນຳ ນາງຈຶ່ງໄດ້ເວົ້າຕໍ່ຜົວຂອງຕົນວ່າ, “ຖ້າເດັກນ້ອຍນີ້ຢ່ານົມຍາມໃດ ຂ້ອຍຈະເອົາລາວໄປ
ພຣະວິຫານຂອງພຣະເຈົ້າ ຊຶ່ງເປັນບ່ອນທີ່ລາວຈະຢູ່ຕະຫລອດຊີວິດຂອງລາວ.”
23ເອນການາກໍຕອບວ່າ, “ຈົ່ງເຮັດຕາມທີ່ເຈົ້າຄິດວ່າດີ ແລະຢູ່ໃນເຮືອນຫລັງນີ້ ຈົນກວ່າລູກ
ຢ່ານົມ ຂໍພຣະຜູ້ເປັນເຈົ້າຊົງບັນດານໃຫ້ຄຳສັນຍາຂອງເຈົ້ານີ້ກາຍເປັນຈິງ” ດັ່ງນັ້ນ ນາງຮັນ-
ນາຈຶ່ງຢູ່ເຮືອນລ້ຽງລູກຂອງຕົນຕໍ່ໄປ. 24ຕໍ່ມາ ຫລັງຈາກເດັກນ້ອຍຢ່ານົມແລ້ວ ນາງຈຶ່ງຕຽມເອົາ
ງົວເຖິກອາຍຸສາມປີ ແປ້ງໜຶ່ງເອຟາ ເຫລົ້າອະງຸ່ນໜຶ່ງຖົງໜັງ ແລ້ວນາງພາລູກທີ່ຍັງນ້ອຍໆຢູ່
ມາຍັງພຣະວິຫານຂອງພຣະຜູ້ເປັນເຈົ້າທີ່ເມືອງຊີໂລ. 25-26ແລ້ວພວກເຂົາກໍຂ້າງົວເຖິກໂຕນັ້ນ
ແລະນຳເອົາເດັກນ້ອຍນັ້ນມາຫາເອລີ ຮັນນາເວົ້າຕໍ່ເອລີວ່າ, “ຂໍໂທດທ່ານ ທ່ານຈື່ຂ້ານ້ອຍໄດ້
ບໍ? ຂ້ານ້ອຍຄືຍິງທີ່ທ່ານເຄີຍເຫັນ ຢືນອ້ອນວອນຕໍ່ພຣະຜູ້ເປັນເຈົ້າຢູ່ທີ່ນີ້. 27ຂ້ານ້ອຍໄດ້ທູນຂໍ
ລູກຈາກພຣະອົງ ແລະພຣະອົງກໍຊົງປະທານໃຫ້ຕາມທີ່ຂ້ານ້ອຍໄດ້ທູນຂໍ. 28ດັ່ງນັ້ນ ຂ້ານ້ອຍຈຶ່ງ
ຂໍອຸທິດຖວາຍເດັກນ້ອຍນີ້ໃຫ້ແກ່ພຣະຜູ້ເປັນເຈົ້າ ຂໍໃຫ້ລາວເປັນຂອງພຣະອົງຕະຫລອດຊົ່ວຊີ-
ວິດຂອງລາວ.” ແລ້ວພວກເຂົາກໍພາກັນຂາບໄຫວ້ ນະມັດສະການພຣະຜູ້ເປັນເຈົ້າຢູ່ທີ່ນັ້ນ.

# ບົດທີ 2

## ຄຳອ້ອນວອນຂອງນາງຮັນນາ

1ນາງຮັນນາໄດ້ອ້ອນວອນວ່າ:

“ພຣະຜູ້ເປັນເຈົ້າຊົງເຮັດໃຫ້ຈິດໃຈຂ້ານ້ອຍເຕັມໄປດ້ວຍຄວາມມ່ວນຊື່ນ
ຂ້ານ້ອຍມີຄວາມສຸກໃຈຍ້ອນສິ່ງທີ່ພຣະອົງຊົງກະທຳ

ຂ້ານ້ອຍຫົວທ້າທາຍໃສ່ສັດຕູຂອງຂ້ານ້ອຍ
ຂ້ານ້ອຍເຕັມໄປດ້ວຍຄວາມມ່ວນຊື່ນ ເພາະພຣະເຈົ້າຊົງຊ່ອຍເຫລືອຂ້ານ້ອຍ.
2 ບໍ່ມີຜູ້ໃດບໍລິສຸດດັ່ງພຣະຜູ້ເປັນເຈົ້າ
ບໍ່ມີພະຜູ້ຄຸ້ມຄອງອົງໃດເໝືອນພຣະເຈົ້າຂອງພວກຂ້ານ້ອຍ.
3 ສຽງໂອ້ອວດຂອງເຈົ້ານັ້ນຈົ່ງມິດ
ຄຳເວົ້າທີ່ຈອງຫອງຈົ່ງມິດເສຍ
ເພາະພຣະຜູ້ເປັນເຈົ້າຊົງເປັນພຣະເຈົ້າທີ່ຮູ້ແຈ້ງເຫັນຈິງ
ພຣະອົງຊົງຕັດສິນການກະທຳທຸກຢ່າງຂອງມະນຸດ.
4 ຄັນທະນູຂອງທະຫານທີ່ເກັ່ງກ້າໄດ້ຫັກ
ແຕ່ຜູ້ທີ່ອ່ອນແອກໍມີແຮງຂຶ້ນ.
5 ຜູ້ທີ່ເຄີຍຮັ່ງມີເປັນດີກໍອອກທ່ອງທ່ຽວຮັບຈ້າງຫາກິນ
ແຕ່ຜູ້ທີ່ຫິວກໍບໍ່ຫິວອີກຕໍ່ໄປ
ພັນລະຍາທີ່ບໍ່ເຄີຍມີລູກກໍຈະມີລູກໄດ້ເຈັດຄົນ
ແຕ່ແມ່ທີ່ມີລູກຫລາຍກໍບໍ່ມີລູກຕໍ່ໄປ.
6 ພຣະຜູ້ເປັນເຈົ້າຊົງເອົາຊີວິດ ແລະໃຫ້ຊີວິດໃໝ່
ພຣະອົງຊົງສົ່ງມະນຸດໄປສູ່ພິພົບຄົນຕາຍ
ແລະນຳພວກເຂົາກັບຄືນມາອີກ.
7 ພຣະອົງຊົງເຮັດໃຫ້ມະນຸດທຸກຍາກ ຫລືຮັ່ງມີຂຶ້ນ
ພຣະອົງຊົງເຮັດໃຫ້ພວກເຂົາຕົກຕໍ່າ ຫລືມີກຽດ
8 ພຣະອົງຊົງຊຸກຍູ້ຄົນຈົນອອກຈາກຄວາມທຸກຍາກແລະຄວາມຂັດສົນ
ພຣະອົງຊົງເຮັດໃຫ້ພວກເຂົາເປັນເພື່ອນກັບພວກເຈົ້ານາຍ
ແລະໃຫ້ພວກເຂົານັ່ງຢູ່ບ່ອນທີ່ມີກຽດ
ຮາກຖານຂອງແຜ່ນດິນໂລກຂຶ້ນຢູ່ກັບພຣະຜູ້ເປັນເຈົ້າ
ພຣະອົງຊົງສ້າງໂລກເທິງຮາກຖານນັ້ນ.
9 ພຣະອົງຊົງຄຸ້ມຄອງການເປັນຢູ່ຂອງໄພ່ພົນທີ່ສັດຊື່ຂອງພຣະອົງ
ແຕ່ວ່າຄົນຊົ່ວຮ້າຍກໍດັບສູນໄປ
ເພາະວ່າມະນຸດບໍ່ມີຜົນສຳເລັດໃນຊີວິດຍ້ອນກຳລັງຂອງຕົນເອງ.
10 ສັດຕູຂອງພຣະຜູ້ເປັນເຈົ້າຈະຖືກທຳລາຍ
ພຣະອົງຈະຊົງແຜດສຽງຈາກຟ້າສະຫວັນຕໍ່ສູ້ພວກເຂົາ
ພຣະຜູ້ເປັນເຈົ້າຈະຕັດສິນຄົນທົ່ວທັງໂລກ
ພຣະອົງຈະປະທານອຳນາດໃຫ້ກະສັດທີ່ພຣະອົງຊົງເລືອກໄວ້
ແລະຈະຊົງໃຫ້ກະສັດນັ້ນໄດ້ຮັບໄຊຊະນະ.”

11 ແລ້ວເອນການາກໍກັບຄືນເມືອເຮືອນທີ່ເມືອງຣາມາ ແຕ່ວ່າລູກຊາຍນ້ອຍນັ້ນໄດ້ຢູ່ຮັບໃຊ້

ພຣະຜູ້ເປັນເຈົ້ານຳປະໂລຫິດ ເອລີ ທີ່ເມືອງຊີໂລ.

## ລູກຊາຍຂອງເອລີ

12ພວກລູກຊາຍຂອງ ເອລີ ເປັນຄົນຂີ້ສໍ້ຂີ້ໂກງ ເພາະພວກເຂົາບໍ່ນັບຖືພຣະຜູ້ເປັນເຈົ້າ.
13ແລະເຮັດຜິດຕໍ່ລະບຽບທີ່ໃຫ້ປະໂລຫິດມີສິດຂໍສ່ວນໜຶ່ງຂອງເຄື່ອງຖວາຍ ພວກເຂົາໄດ້ເຮັດ
ດັ່ງນີ້ຄື ເມື່ອຜູ້ໃດຜູ້ໜຶ່ງຂ້າສັດຖວາຍບູຊາ ໃນຂະນະທີ່ລາວກຳລັງຕົ້ມຊີ້ນຖວາຍຢູ່ນັ້ນ ຄົນໃຊ້
ຂອງປະໂລຫິດກໍຖືເຫລັກສາມງ່າມເຂົ້າມາ. 14ລາວເອົາເຫລັກນັ້ນສັກລົງໃນຊີ້ນຕົ້ມ ແລະຖ້າວ່າ
ເຫລັກນັ້ນສຽບໄດ້ຫຍັງຂຶ້ນມາ ສິ່ງນັ້ນຕ້ອງເປັນຂອງປະໂລຫິດ ພວກເຂົາໄດ້ເຮັດຢ່າງນັ້ນກັບ
ພວກອິສຣາເອນທຸກຄົນທີ່ມາຖວາຍເຄື່ອງບູຊາທີ່ເມືອງຊີໂລ.

15ນອກຈາກນັ້ນ ກ່ອນທີ່ຈະເອົາໄຂມັນຂຶ້ນມາເຜົາ ຄົນໃຊ້ຂອງປະໂລຫິດຕ້ອງມາເວົ້າຕໍ່ຜູ້ທີ່
ຖວາຍນັ້ນວ່າ, "ເອົາຊີ້ນດິບຕ່ອນໜຶ່ງມາໃຫ້ປະໂລຫິດແດ່ ເພາະເພິ່ນຢາກເອົາໄປປີ້ງ ເພິ່ນບໍ່
ຢາກກິນຊີ້ນຕົ້ມ." 16ຖ້າຊາຍຄົນນັ້ນຕອບວ່າ, "ຂໍໃຫ້ເອົາໄຂມັນນີ້ເຜົາສາກ່ອນ ແລ້ວຈຶ່ງເອົາ
ຕາມທີ່ເຈົ້າຕ້ອງການ" ຄົນໃຊ້ຂອງປະໂລຫິດກໍເວົ້າວ່າ, "ບໍ່! ເອົາໃຫ້ຂ້ອຍດຽວນີ້ສາ ຖ້າວ່າເຈົ້າ
ບໍ່ໃຫ້ໂດຍດີ ຂ້ອຍກໍຈະໃຊ້ກຳລັງ."

17ດັ່ງນັ້ນແຫລະ ຄວາມບາບຂອງພວກລູກຊາຍເອລີ ຈຶ່ງໃຫຍ່ທີ່ສຸດໃນສາຍພຣະເນດຂອງ
ພຣະຜູ້ເປັນເຈົ້າ ເພາະວ່າພວກເຂົາສະແດງການໝິ່ນປະໝາດເຄື່ອງຖວາຍບູຊາແດ່ພຣະຜູ້-
ເປັນເຈົ້າ.

## ຊາມູເອນທີ່ເມືອງຊີໂລ

18ເດັກຊາຍຊາມູເອນໄດ້ຮັບໃຊ້ພຣະຜູ້ເປັນເຈົ້າເໝືອນດັ່ງປະໂລຫິດ ລາວໄດ້ນຸ່ງເຄື່ອງສະ-
ຫງ່າງາມ. 19ທຸກໆ ປີໃດ ແມ່ຂອງຊາມູເອນຕ້ອງຫຍິບເສື້ອລ່າມໂຕນ້ອຍໆ ມາໃຫ້ລາວ ໃນ
ເວລາທີ່ນາງ ແລະຜົວໄປຖວາຍເຄື່ອງບູຊາປະຈຳປີ. 20ແລ້ວເອລີກໍອວຍພອນໃຫ້ແກ່ເອນກາ-
ນາກັບເມຍຂອງລາວໂດຍເວົ້າວ່າ, "ຂໍໃຫ້ພຣະຜູ້ເປັນເຈົ້າຊົງປະທານລູກໃຫ້ແກ່ເຈົ້າກັບເມຍຜູ້ນີ້
ອີກ ເພື່ອທົດແທນຜູ້ທີ່ເຈົ້າໄດ້ຖວາຍໃຫ້ເປັນຂອງພຣະອົງໄປແລ້ວ." ແລ້ວພວກເຂົາກໍພາກັນກັບ
ບ້ານ. 21ຕໍ່ມາ ພຣະຜູ້ເປັນເຈົ້າໄດ້ອວຍພອນໃຫ້ນາງຮັນນາ ນາງມີລູກຊາຍຕື່ມອີກສາມຄົນ
ແລະລູກສາວສອງຄົນ ສ່ວນເດັກຊາຍຊາມູເອນນັ້ນກໍເຕີບໃຫຍ່ຂຶ້ນໃນການຮັບໃຊ້ພຣະຜູ້ເປັນ-
ເຈົ້າ.

## ເອລີ ແລະລູກຊາຍ

22ດຽວນີ້ ເອລີໄດ້ເຖົ້າແກ່ຫລາຍແລ້ວ ເພິ່ນໄດ້ຍິນຫລາຍເລື່ອງທີ່ລູກຊາຍຂອງເພິ່ນເຮັດຕໍ່
ພວກອິສຣາເອນ ເປັນຕົ້ນ ພວກເຂົາໄດ້ເປັນຊູ້ກັບພວກຜູ້ຍິງທີ່ມາບົວລະບັດຮັບໃຊ້ຢູ່ຕໍ່ໜ້າຫໍ-
ເຕັນສັກສິດ 23ດັ່ງນັ້ນ ເພິ່ນຈຶ່ງເວົ້າຕໍ່ພວກເຂົາວ່າ, "ເປັນຫຍັງພວກເຈົ້າຈຶ່ງເຮັດສິ່ງເຫລົ່ານີ້?
ຫລາຍຄົນໄດ້ບອກຂ້ອຍກ່ຽວກັບພຶດຕິກຳອັນຊົ່ວຊ້າຂອງພວກເຈົ້າ. 24ລູກເອີຍ ຈົ່ງເຊົາເຮັດການ
ເຫລົ່ານີ້ສາ ພວກໄພ່ພົນຂອງພຣະຜູ້ເປັນເຈົ້າໄດ້ເວົ້າກ່ຽວກັບເລື່ອງບໍ່ດີນີ້ເລື້ອຍໆ. 25ຖ້າວ່າຜູ້
ໜຶ່ງເຮັດຜິດຕໍ່ຄົນອື່ນ ພຣະເຈົ້າຊົງປ້ອງກັນລາວໄດ້ ແຕ່ວ່າ ເມື່ອຜູ້ໜຶ່ງເຮັດຜິດຕໍ່ສູ້ພຣະເຈົ້າ
ແມ່ນໃຜຈະສາມາດປ້ອງກັນລາວໄວ້ໄດ້?" ແຕ່ພວກເຂົາບໍ່ໄດ້ຟັງພໍ່ ເພາະວ່າພຣະຜູ້ເປັນເຈົ້າຊົງ

ຕັດສິນພຣະໄທແລ້ວວ່າ ຈະປະຫານຊີວິດຂອງພວກເຂົາ.
26ເດັກຊາຍຊາມູເອນໄດ້ໃຫຍ່ຂຶ້ນ ພຣະຜູ້ເປັນເຈົ້າ ແລະມະນຸດກໍພໍໃຈນຳລາວ.

## ການປະກາດພຣະທຳຕໍ່ສູ້ຄອບຄົວເອລີ

27ມີຜູ້ກາດພຣະທຳຜູ້ໜຶ່ງ ໄດ້ມາຫາເອລີ ແລະບອກວ່າ ພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້,
“ຄາວເມື່ອອາໂຣນບັນພະບູລຸດຂອງລາວພ້ອມທັງຄອບຄົວຂອງລາວໄດ້ເປັນທາດຂອງຟາຣາໂອ
ກະສັດແຫ່ງປະເທດເອຢິບນັ້ນ ເຮົາໄດ້ປະກົດໃຫ້ລາວເຫັນ. 28ທ່າມກາງພວກຕະກູນອິສຣາ-
ເອນ ເຮົາໄດ້ເລືອກເອົາແຕ່ຄອບຄົວຂອງລາວໃຫ້ເປັນປະໂລຫິດບົວລະບັດຮັບໃຊ້ເຮົາ ເພື່ອເຮັດ
ວຽກກ່ຽວກັບການຖວາຍບູຊາຄື ການເຜົາເຄື່ອງຫອມ ແລະນຳເອົາຫີບສັກສິດມາຕໍ່ໜ້າເຮົາ
ຝ່າຍເຮົາໆ ກໍໃຫ້ພວກເຂົາມີສິດເອົາສ່ວນໜຶ່ງຂອງເຄື່ອງບູຊາທີ່ເຜົາຢູ່ເທິງແທ່ນບູຊານັ້ນ.
29ແລ້ວເປັນຫຍັງເຈົ້າຈຶ່ງໂລບມາກໃນເຄື່ອງບູຊາ ແລະເຄື່ອງຖວາຍຕາມຄຳສັ່ງຂອງເຮົາ? ເອລີ
ເປັນຫຍັງເຈົ້າຈຶ່ງໃຫ້ກຽດແກ່ພວກລູກຊາຍຂອງເຈົ້າຫລາຍກວ່າເຮົາ?
30ເຮົາພຣະຜູ້ເປັນເຈົ້າຂອງຊາວອິສຣາເອນ ເຄີຍສັນຍາມາກ່ອນແລ້ວວ່າ ຄອບຄົວຂອງເຈົ້າ
ແລະຜູ້ທີ່ຢູ່ໃນເຊື້ອສາຍດຽວກັນກັບເຈົ້າ ຕ້ອງເປັນປະໂລຫິດຮັບໃຊ້ເຮົາຕະຫລອດໄປ ແຕ່ດຽວນີ້
ເຮົາຂໍເວົ້າວ່າພວກເຈົ້າຈະບໍ່ໄດ້ເປັນປະໂລຫິດຕໍ່ໄປອີກ ແຕ່ວ່າເຮົາຈະໃຫ້ກຽດແກ່ຜູ້ທີ່ໃຫ້ກຽດເຮົາ
ເຮົາຈະໝິ່ນປະໝາດຕໍ່ຜູ້ທີ່ໝິ່ນປະໝາດເຮົາ. 31ດຽວນີ້ ຈົ່ງເບິ່ງແມ ອີກບໍ່ດົນເຮົາຈະຂ້າຊາຍໜຸ່ມ
ທຸກໆ ຄົນຈົນຮອດເຖົ້າແກ່. 32ເຈົ້າຈະຕົກທຸກໄດ້ຍາກລຳບາກ ແລະຈະອິດສາພວກອິສຣາເອນ
ທີ່ໄດ້ຮັບຄວາມພອນທຸກຢ່າງ ແຕ່ວ່າບໍ່ມີຜູ້ໃດໃນຄອບຄົວຂອງເຈົ້າມີຊີວິດຢູ່ຕໍ່ໄປຈົນຮອດເຖົ້າ
ແກ່. 33ແຕ່ເຮົາຍັງຈະໃຫ້ຜູ້ໜຶ່ງໃນເຊື້ອສາຍຂອງເຈົ້າມີຊີວິດຢູ່ ລາວຈະເປັນປະໂລຫິດຮັບໃຊ້ເຮົາ
ແຕ່ລາວຈະກາຍເປັນຄົນຕາບອດ ແລະສູນເສຍຄວາມຫວັງທຸກຢ່າງ ສ່ວນເຊື້ອສາຍຄົນອື່ນໆ
ຂອງເຈົ້າຈະຕາຍຢ່າງທາລຸນ. 34ເມື່ອລູກຊາຍທັງສອງຂອງເຈົ້າຄື ໂຮບນີ ແລະຟີເນຮາດຕາຍ
ໄປ ໃນມື້ດຽວກັນນັ້ນແຫລະ ເຮົາຈະສະແດງໃຫ້ເຈົ້າເຫັນວ່າ ສິ່ງທີ່ເຮົາໄດ້ເວົ້ານີ້ເປັນຄວາມຈິງ.
35ເຮົາຈະເລືອກເອົາປະໂລຫິດຜູ້ທີ່ສັດຊື່ຕໍ່ເຮົາ ແລະຈະໃຫ້ລາວເຮັດທຸກສິ່ງທີ່ເຮົາຕ້ອງການ ເຮົາ
ຈະໃຫ້ລາວມີເຊື້ອສາຍເປັນຜູ້ຮັບໃຊ້ຕະຫລອດໄປຕໍ່ໜ້າເຈົ້າຊີວິດທີ່ເຮົາໄດ້ເລືອກໄວ້ນັ້ນ. 36ບໍ່ວ່າ
ໃຜກໍຕາມໃນເຊື້ອສາຍຂອງເຈົ້າທີ່ມີຊີວິດຢູ່ຕໍ່ໄປ ຈະຕ້ອງໄປຂໍເງິນ ແລະອາຫານຈາກເຈົ້າຊີວິດ
ແລະຂໍອະນຸຍາດໄປຮັບໃຊ້ປະໂລຫິດເພື່ອໃຫ້ມີຢູ່ມີກິນ.

# ບົດທີ 3

## ພຣະຜູ້ເປັນເຈົ້າຊົງປະກົດຕໍ່ຊາມູເອນ

1ຊາມູເອນໄດ້ຮັບໃຊ້ພຣະຜູ້ເປັນເຈົ້າພາຍໃຕ້ການນຳພາຂອງເອລີ ໃນເວລາທີ່ຮັບໃຊ້ຢູ່ນັ້ນ
ກໍບໍ່ຄ່ອຍມີຖ້ອຍຄຳຈາກພຣະຜູ້ເປັນເຈົ້າປານໃດ ແລະດົນໆ ຈຶ່ງຄ່ອຍມີນິມິດເທື່ອໜຶ່ງ.
2ໃນຄືນໜຶ່ງ ເອລີຊຶ່ງເປັນຄົນຕາບໍ່ດີຍ້ອນຄວາມຊະລາ ໄດ້ນອນຢູ່ທີ່ຫ້ອງສ່ວນຕົວຂອງເພິ່ນ.
3ສ່ວນຊາມູເອນໄດ້ນອນຢູ່ໃນພຣະວິຫານບ່ອນທີ່ມີຫີບຄຳສັນຍາຂອງພຣະເຈົ້າ ແລະຕະກຽງກໍ
ໃຕ້ຢູ່. 4ໃນຂະນະທີ່ນອນຢູ່ນັ້ນ ພຣະຜູ້ເປັນເຈົ້າໄດ້ເອີ້ນຊາມູເອນ ແລະລາວກໍຂານຕອບວ່າ,

“ໂດຍຂ້ານ້ອຍ.” 5ແລ້ວລາວກໍແລ່ນໄປເວົ້າຕໍ່ ເອລີ ວ່າ, “ທ່ານເອີ້ນຂ້ານ້ອຍບໍ? ຂ້ານ້ອຍຢູ່ນີ້
ແລ້ວ” ແຕ່ ເອລີ ຕອບວ່າ, “ຂ້ອຍບໍ່ໄດ້ເອີ້ນເຈົ້າ ຈົ່ງກັບໄປນອນສາ” ຊາມູເອນ ກໍກັບຄືນໄປ
ນອນ. 6ພຣະຜູ້ເປັນເຈົ້າ ຊົງ ເອີ້ນ ຊາມູເອນ ເທື່ອທີສອງ ລາວກໍລຸກຂຶ້ນອີກ ແລະໄປເວົ້າຕໍ່ ເອລີ
ວ່າ, “ທ່ານເອີ້ນຂ້ານ້ອຍບໍ? ຂ້ານ້ອຍຢູ່ນີ້ແລ້ວ” ແຕ່ ເອລີ ຕອບວ່າ, “ລູກເອີຍ ພໍ່ບໍ່ໄດ້ເອີ້ນເຈົ້າ
ດອກ ຈົ່ງກັບຄືນໄປນອນສາ.”

7ຊາມູເອນ ກໍຍັງບໍ່ທັນຮູ້ຈັກ ພຣະຜູ້ເປັນເຈົ້າ ເພາະວ່າພຣະອົງຍັງບໍ່ເຄີຍເວົ້າກັບລາວມາກ່ອນ.
8ພຣະຜູ້ເປັນເຈົ້າ ເອີ້ນ ຊາມູເອນ ອີກ ເທື່ອ ທີ ສາມ ລາວກໍລຸກຂຶ້ນອີກ ແລະ ໄປຖາມ ເອລີ ວ່າ,
“ທ່ານເອີ້ນຂ້ານ້ອຍບໍ? ຂ້ານ້ອຍຢູ່ນີ້ແລ້ວ.” ແລ້ວ ເອລີ ກໍເຂົ້າໃຈວ່າ ແມ່ນ ພຣະຜູ້ເປັນເຈົ້າ ເປັນຜູ້
ຊົງ ເອີ້ນເດັກຊາຍນີ້. 9ດັ່ງນັ້ນ ເພິ່ນຈຶ່ງ ເວົ້າຕໍ່ລາວວ່າ, “ຈົ່ງກັບຄືນໄປນອນສາ ແລະຖ້າວ່າເພິ່ນ
ເອີ້ນເຈົ້າອີກໃຫ້ເຈົ້າເວົ້າວ່າ, “ຜູ້ຮັບໃຊ້ຂອງພຣະອົງກຳລັງຟັງຢູ່ ຂໍພຣະອົງຊົງຮັບສັ່ງເທີ້ນ” ແລ້ວ
ຊາມູເອນ ກໍກັບຄືນໄປນອນ.

10ຕໍ່ມາອີກ ພຣະຜູ້ເປັນເຈົ້າ ໄດ້ມາເອີ້ນຢູ່ບ່ອນນັ້ນຄື ແຕ່ກ່ອນວ່າ, “ຊາມູເອນ ຊາມູເອນ”
ຊາມູເອນ ກໍ ຕອບ ຂຶ້ນ ວ່າ, “ຜູ້ຮັບ ໃຊ້ ຂອງ ພຣະອົງ ກຳລັງ ຟັງ ຢູ່ ຂໍ ພຣະອົງ ຊົງ ຮັບ ສັ່ງ ເທີ້ນ.”
11ພຣະຜູ້ເປັນເຈົ້າ ຊົງກ່າວຕໍ່ລາວວ່າ, “ເຮົາຈະເຮັດສິ່ງທີ່ໜ້າຢ້ານຫລາຍຕໍ່ພວກ ອິສຣາເອນ ຖ້າ
ທຸກຄົນໄດ້ຍິນເລື່ອງນີ້ແລ້ວ ຈະຕ້ອງຢ້ານກົວທີ່ສຸດ. 12ໃນມື້ນັ້ນ ເຮົາຈະເຮັດຕາມຄຳເວົ້າທັງໝົດ
ຂອງເຮົາທີ່ໄດ້ກ່າວໄວ້ຕໍ່ໜ້າຄອບຄົວ ເອລີ. 13ເຮົາໄດ້ບອກລາວແລ້ວວ່າ ເຮົາຈະລົງໂທດຄອບ-
ຄົວຂອງລາວຕະຫລອດໄປ ເພາະວ່າ ລູກຊາຍຂອງລາວໄດ້ດ່າເຮົາ ສ່ວນ ເອລີ ກໍຮູ້ຈັກວ່າພວກ
ເຂົາໄດ້ເວົ້າດັ່ງນັ້ນ ແຕ່ລາວບໍ່ໄດ້ຫ້າມພວກເຂົາ. 14ດ້ວຍເຫດນີ້ ເຮົາຈຶ່ງ ເວົ້າຢ່າງໜັກແໜ້ນຕໍ່
ຄອບຄົວຂອງ ເອລີ ວ່າ ບໍ່ມີການບູຊາ ຫລືການຖວາຍໃດໆ ທີ່ຈະສາມາດເຮັດໃຫ້ພວກເຂົາພົ້ນ
ຈາກຄວາມຜິດອັນຮ້າຍແຮງນີ້ໄດ້.”

15ຊາມູເອນ ນອນຫລັບໄປຈົນຮອດມື້ເຊົ້າ ແລ້ວໄດ້ລຸກຂຶ້ນໄປໄຂປະຕູພຣະວິຫານ ແຕ່ລາວບໍ່
ກ້າບອກນິມິດນີ້ແກ່ ເອລີ. 16ເອລີ ຈຶ່ງ ເອີ້ນລາວວ່າ, "ຊາມູເອນ ລູກເອີຍ!" ຊາມູເອນ ຕອບວ່າ,
"ຂ້ານ້ອຍຢູ່ນີ້." 17ເອລີ ໄດ້ຖາມລາວວ່າ “ພຣະຜູ້ເປັນເຈົ້າ ໄດ້ບອກເຈົ້າວ່າຢ່າງໃດ? ຢ່າປິດບັງພໍ່
ເລີຍ ຖ້າເຈົ້າບໍ່ບອກພໍ່ໃນສິ່ງທີ່ພຣະອົງຊົງກ່າວ ແກ່ເຈົ້ານັ້ນ ພຣະເຈົ້າ ຈະລົງ ໂທດ ເຈົ້າຢ່າງຮ້າຍ
ແຮງທີ່ສຸດ.” 18ດັ່ງນັ້ນ ຊາມູເອນ ຈຶ່ງບອກເພິ່ນທຸກຢ່າງ ໂດຍບໍ່ໄດ້ປິດບັງຫຍັງໝົດ ແລ້ວ ເອລີ ຈຶ່ງ
ເວົ້າວ່າ, “ພຣະອົງ ເປັນ ພຣະຜູ້ເປັນເຈົ້າ ໃຫ້ພຣະອົງ ເຮັດທຸກຢ່າງຕາມນ້ຳພຣະໄທຂອງພຣະອົງ
ເທີ້ນ.”

19ໃນຂະນະທີ່ຊາມູເອນ ໃຫຍ່ຂຶ້ນນັ້ນ ພຣະຜູ້ເປັນເຈົ້າກໍຊົງສະຖິດຢູ່ນຳລາວ ແລະຊົງເຮັດໃຫ້
ທຸກສິ່ງທີ່ ຊາມູເອນ ໄດ້ ເວົ້າອອກມານັ້ນ ເປັນຄວາມຈິງ. 20ດັ່ງນັ້ນ ຊາວ ອິສຣາເອນ ທຸກຄົນ ແຕ່
ເໜືອ ຕະຫລອດ ໃຕ້ ຈຶ່ງ ຮູ້ຈັກ ວ່າ ຊາມູເອນ ແມ່ນ ຜູ້ປະກາດ ພຣະທຳ ຂອງ ພຣະຜູ້ເປັນເຈົ້າ ແທ້.
21ໃນ ເມືອງ ຊີໂລ ບ່ອນທີ່ ພຣະຜູ້ເປັນເຈົ້າ ໄດ້ຊົງປະກົດຕໍ່ ຊາມູເອນ ແລະຊົງກ່າວຕໍ່ລາວນັ້ນ
ພຣະອົງກໍຊົງປະກົດ ແລະກ່າວຕໍ່ລາວອີກ ເມື່ອຊາມູເອນ ເວົ້າຫຍັງ ຊາວ ອິສຣາເອນ ທຸກຄົນກໍ
ເຊື່ອຟັງລາວ.

# ບົດທີ 4

## ສັດຕູຢຶດເອົາຫີບຄຳສັນຍາ

[1]ໃນເວລານັ້ນ ຊາວອິສຣາເອນໄດ້ອອກຮົບເສິກກັບພວກຟີລິດສະຕິນ ພວກອິສຣາເອນໄດ້
ຕັ້ງຄ້າຍຢູ່ທີ່ເມືອງ ເອເບັນເອເຊ ສ່ວນພວກຟີລິດສະຕິນໄດ້ຕັ້ງຄ້າຍຢູ່ທີ່ເມືອງອາເຟັກ. [2]ພວກ
ຟີລິດສະຕິນໄດ້ຕຽມສູ້ຮົບ ພວກເຂົາໄດ້ຕໍ່ສູ້ຢ່າງດຸເດືອດຈົນຕີຊະນະພວກອິສຣາເອນໄດ້ ໂດຍ
ໄດ້ຂ້າພວກເຂົາຕາຍໃນສະໜາມຮົບປະມານສີ່ພັນຄົນ.
[3]ເມື່ອພວກທີ່ເຫລືອຕາຍໄດ້ກັບຄືນຄ້າຍພັກ ຜູ້ນຳຊາວອິສຣາເອນຈຶ່ງເວົ້າຂຶ້ນວ່າ “ມື້ນີ້ ເປັນ
ຫຍັງພຣະຜູ້ເປັນເຈົ້າຈຶ່ງໃຫ້ຊາວຟີລິດສະຕິນຕີຊະນະພວກເຮົາ? ຈົ່ງໄປເອົາຫີບຄຳສັນຍາຂອງ
ພຣະຜູ້ເປັນເຈົ້າມາຈາກເມືອງຊີໂລ ເພື່ອວ່າພຣະອົງຈະໄດ້ຢູ່ກັບພວກເຮົາ ແລະຊ່ອຍພວກເຮົາ
ໃຫ້ພົ້ນຈາກເງື້ອມມືຂອງສັດຕູ.
[4]ດັ່ງນັ້ນ ພວກເຂົາຈຶ່ງສົ່ງຄົນໄປເມືອງຊີໂລ ເພື່ອນຳເອົາຫີບຄຳສັນຍາຂອງພຣະຜູ້ເປັນເຈົ້າ
ແຫ່ງຈັກກະວານ ຜູ້ຊົງປະທັບຢູ່ເທິງພຣະທີ່ນັ່ງລະຫວ່າງກາງເທວະດາເຄຣຸບນັ້ນມາ ຝ່າຍໂຮບນີ
ແລະຟີເນຮາດລູກຊາຍທັງສອງຂອງເອລີກໍມາພ້ອມຫີບຄຳສັນຍານັ້ນ. [5]ເມື່ອຫີບຄຳສັນຍາມາ
ຮອດ ພວກອິສຣາເອນກໍຮ້ອງສຽງດັງສະໜັ່ນຂຶ້ນຈົນແຜ່ນດິນສັ່ນສະເທືອນ.
[6]ເມື່ອພວກຟີລິດສະຕິນໄດ້ຍິນສຽງດັງສະໜັ່ນຫວັ່ນໄຫວນັ້ນ ຈຶ່ງເວົ້າຂຶ້ນວ່າ, “ຈົ່ງຟັງສຽງ
ຮ້ອງໃນຄ້າຍຂອງຊາວເຮັບເຣີແມ ມັນແມ່ນຫຍັງແທ້? ແຕ່ເມື່ອພວກເຂົາໄດ້ຮູ້ວ່າຫີບຄຳສັນຍາ
ຂອງພຣະຜູ້ເປັນເຈົ້າມາຮອດຄ້າຍພັກຊາວເຮັບເຣີແລ້ວ. [7]ພວກເຂົາກໍພາກັນຢ້ານກົວ ແລະ
ເວົ້າວ່າ, “ພຣະເຈົ້າໄດ້ມາຊ່ອຍໃນຄ້າຍພັກຂອງພວກເຂົາແລ້ວ ບັດນີ້ ພວກເຮົາຈະຕ້ອງເສຍໄຊ
ແນ່ນອນ ເພາະພວກເຮົາບໍ່ເຄີຍພົບເຫັນແບບນີ້ມາກ່ອນ. [8]ແມ່ນໃຜຈະສາມາດຊ່ອຍພວກເຮົາໃຫ້
ພົ້ນຈາກອຳນາດຂອງພຣະເຈົ້າອົງນີ້ໄດ້? ແມ່ນພຣະເຈົ້າອົງນີ້ແຫລະ ທີ່ໄດ້ຂ້າຊາວເອຢິບ
ດ້ວຍໄພພິບັດນາໆຊະນິດຢູ່ໃນຖິ່ນແຫ້ງແລ້ງກັນດານ. [9]ຊາວຟີລິດສະຕິນທັງຫລາຍເອີຍ ຈົ່ງ
ເຂັ້ມແຂງເທີ້ນ ຈົ່ງຕໍ່ສູ້ຢ່າງລູກຜູ້ຊາຍ ຫລືວ່າພວກເຮົາຈະເປັນທາດຂອງຊາວເຮັບເຣີດັ່ງທີ່ພວກ
ເຂົາເຄີຍເປັນທາດຂອງພວກເຮົາ ດັ່ງນັ້ນ ຈົ່ງຕໍ່ສູ້ຢ່າງລູກຜູ້ຊາຍເທີ້ນ.”
[10]ຝ່າຍພວກຟີລິດສະຕິນກໍຕໍ່ສູ້ຢ່າງພິລາດອາດຫານ ພວກອິສຣາເອນຈຶ່ງພ່າຍແພ້ ແລະ
ແຕກໜີເມືອບ້ານເມືອງຂອງໃຜລາວ ທະຫານອິສຣາເອນໄດ້ຖືກຂ້າຕາຍສາມສິບພັນຄົນ ຊຶ່ງ
ເປັນການເສຍໄຊຄັ້ງຍິ່ງໃຫຍ່. [11]ສ່ວນຫີບຄຳສັນຍາຂອງພຣະຜູ້ເປັນເຈົ້າກໍຖືກຢຶດເອົາໄປໂຮບ-
ນີ ແລະຟີເນຮາດລູກຊາຍທັງສອງຂອງເອລີກໍຖືກຂ້າຕາຍ.

## ເອລີເສຍຊີວິດ

[12]ໃນມື້ດຽວກັນນັ້ນ ມີຊາຍຕະກູນເບັນຢາມິນຄົນໜຶ່ງໄດ້ແລ່ນມາແຕ່ສະໜາມຮົບ ມາເມືອງ
ຊີໂລດ້ວຍຄວາມໂສກເສົ້າ ລາວໄດ້ຈີກເສື້ອ ແລະເອົາຂີ້ດິນໂຮຍໃສ່ຫົວ. [13]ຊາຍຄົນນັ້ນມາໃນ
ເມືອງເພື່ອບອກຂ່າວ ເມື່ອທຸກຄົນໄດ້ຍິນກໍຮ້ອງໄຫ້ດ້ວຍຄວາມເສຍໃຈ ສ່ວນເອລີທີ່ກຳລັງນັ່ງ
ຖ້າຢູ່ໃກ້ຫົນທາງ ພ້ອມທັງຄິດເປັນຫ່ວງນຳຫີບຄຳສັນຍາຂອງພຣະເຈົ້າ.
[14]ເມື່ອເພິ່ນໄດ້ຍິນສຽງອຶກກະທຶກນີການອງຈຶ່ງຖາມຂຶ້ນວ່າ “ແມ່ນສຽງຫຍັງ” ຊາຍຄົນນັ້ນກໍ

ຟ້າວແລ່ນມາບອກຂ່າວແກ່ ເອລີ. [15](ໃນຂະນະນີ້ ເອລີ ມີອາຍຸໄດ້ເກົ້າສິບແປດປີແລະຕາກໍບອດໝົດ).

[16]ຊາຍຄົນນັ້ນຈຶ່ງເວົ້າວ່າ, "ມື້ນີ້ ຂ້ານ້ອຍໜີມາຈາກສະໜາມຮົບ ແລະໄດ້ແລ່ນມາບ່ອນນີ້" ເອລີ ຈຶ່ງຖາມລາວວ່າ, "ລູກເອີຍ ມີເລື່ອງຫຍັງເກີດຂຶ້ນ?" [17]ຄົນນຳຂ່າວຜູ້ນັ້ນຈຶ່ງຕອບວ່າ ພວກຟີລິດສະຕິນ ໄດ້ໄລ່ພວກ ອິສຣາເອນ ແຕກຜາຍໜີໄປ ມັນເປັນການຜ່າຍແພ້ຢ່າງໜ້າຢ້ານທີ່ສຸດສຳລັບພວກເຮົາ ຢູ່ໃນເຫດການນັ້ນ ໂຮບນີ ແລະ ຟີເນຮາດ ລູກຊາຍທັງສອງຂອງທ່ານກໍຖືກຂ້າຕາຍ ແລະຫີບຄຳສັນຍາຂອງ ພຣະເຈົ້າ ກໍຖືກຍຶດໄປ."

[18]ຝ່າຍ ເອລີ ຊຶ່ງນັ່ງຢູ່ໃກ້ປະຕູພຣະວິຫານ ເມື່ອຊາຍຄົນນັ້ນເວົ້າເຖິງຫີບຄຳສັນຍາ ເພິ່ນກໍຫງາຍຫລັງລົງຈົນຄໍຫັກຕາຍ ເພາະວ່າເພິ່ນເປັນຄົນເຖົ້າ ແລະຕຸ້ຍ ເອລີ ເປັນຜູ້ປົກຄອງພວກອິ-ສຣາເອນ ເປັນເວລາສີ່ສິບປີ.

## ເມຍຟີເນຮາດເສຍຊີວິດ

[19]ລູກໃພ້ຂອງ ເອລີ ຜູ້ເປັນເມຍຂອງ ຟີເນຮາດ ຊຶ່ງກຳລັງຖືພາ ແລະໃກ້ຈະອອກແລ້ວ ເມື່ອນາງໄດ້ຍິນຂ່າວວ່າຫີບຄຳສັນຍາຂອງ ພຣະເຈົ້າ ຖືກຍຶດ ແລະພໍ່ປູ່ກັບຜົວຂອງຕົນກໍເສຍຊີວິດແລ້ວ ໃນທັນໃດນັ້ນ ດ້ວຍຄວາມເສຍໃຈ ນາງກໍເຈັບທ້ອງ ແລະເກີດລູກອອກມາ. [20]ນາງກຳ-ລັງຈະສິ້ນໃຈຕາຍ ແຕ່ພວກຜູ້ຍິງທີ່ພວມຊ່ວຍນາງໄດ້ເວົ້າວ່າ, "ເຈົ້າໄດ້ລູກຊາຍໄດ໋! ຈົ່ງເຮັດໃຈໃຫ້ເຂັ້ມແຂງເອົາໄວ້" ແຕ່ນາງບໍ່ໄດ້ຟັງ ຫລືຕອບຢ່າງໃດໝົດ.

[21]ນາງໄດ້ໃສ່ຊື່ເດັກນັ້ນວ່າ ອິຄາບົດ ທີ່ແປວ່າ "ລັດສະໝີຂອງ ພຣະເຈົ້າ ໄດ້ຈາກພວກ ອິ-ສຣາເອນ ໄປແລ້ວ" ຊຶ່ງໝາຍເຖິງຫີບຄຳສັນຍາຖືກຍຶດໄປ ແລະພໍ່ປູ່ກັບຜົວຂອງນາງກໍເສຍຊີວິດ
[22]ນາງໄດ້ກ່າວວ່າ "ລັດສະໝີຂອງ ພຣະເຈົ້າ ໄດ້ຈາກພວກ ອິສຣາເອນ ໄປແລ້ວ ເພາະວ່າ ຫີບຄຳສັນຍາຂອງ ພຣະເຈົ້າ ກໍໄດ້ຖືກຍຶດໄປ".

# ບົດທີ 5

## ຄົນຟີລິດສະຕິນຖືກສາບແຊ່ງຍ້ອນຫີບຄຳສັນຍາ

[1]ຄົນ ຟີລິດສະຕິນ ໄດ້ຍຶດເອົາຫີບຄຳສັນຍາຂອງ ພຣະເຈົ້າ ໄປ ແລະໄດ້ຫາມຫີບນັ້ນອອກຈາກ
ເອເບັນເອເຊ ໄປເມືອງ ອາຊະໂດດ [2]ພວກ ຟີລິດສະຕິນ ໄດ້ນຳເອົາຫີບຄຳສັນຍາຂອງ ພຣະເຈົ້າ
ໄປໄວ້ໃນພະວິຫານຂອງພະ ດາໂກນ ໂດຍວາງໄວ້ທາງຂ້າງຮູບພະ ດາໂກນ [3]ໃນມື້ໜ້າມາ ເມື່ອ
ຊາວເມືອງ ອາຊະໂດດ ໄດ້ລຸກຂຶ້ນແຕ່ເຊົ້າ ເບິ່ງແມ, ຮູບພະ ດາໂກນ ໄດ້ລົ້ມຂວ້ຳໜ້າລົງພື້ນດິນຕໍ່-
ໜ້າຫີບຄຳສັນຍາຂອງ ພຣະຜູ້ເປັນເຈົ້າ, ພວກເຂົາໄດ້ຍົກຮູບພະ ດາໂກນ ຂຶ້ນຕັ້ງໄວ້ບ່ອນເກົ່າ
[4]ແຕ່ເມື່ອພວກເຂົາຕື່ນແຕ່ເຊົ້າໃນມື້ໜ້າມາ ເບິ່ງແມ, ຮູບພະ ດາໂກນ ໄດ້ລົ້ມຂວ້ຳໜ້າລົງພື້ນດິນ
ຕໍ່ໜ້າຫີບຄຳສັນຍາຂອງ ພຣະຜູ້ເປັນເຈົ້າ ອີກ, ຫົວຂອງພະ ດາໂກນ ແລະມືທັງສອງຖືກຕັດອອກ
ໄປວາງໄວ້ຢູ່ຕີນປະຕູ ເຫລືອຢູ່ແຕ່ລຳຕົວຂອງຮູບພະ ດາໂກນ ເທົ່ານັ້ນ. [5]ເພາະເຫດນີ້ເອງ ປະ-
ໂລຫິດຂອງພະ ດາໂກນ ແລະຜູ້ທີ່ເຂົ້າໄປໃນວິຫານຂອງພະ ດາໂກນ ຈຶ່ງບໍ່ຢຽບປະຕູພະວິຫານ
ຂອງພະ ດາໂກນ ຢູ່ເມືອງ ອາຊະໂດດ ຈົນຮອດທຸກມື້ນີ້.

[6]ພຣະຫັດຂອງ ພຣະຜູ້ເປັນເຈົ້າ ຢູ່ເໜືອປະຊາຊົນ ອາຊະໂດດ ຢ່າງໜັກ, ພຣະອົງຊົງທຳລາຍ
ພວກເຂົາ ແລະຊ້ຽນຕີພວກເຂົາພ້ອມ ທັງຊາວ ອາຊະໂດດ ແລະບໍລິເວນໃກ້ຄຽງເມືອງນັ້ນດ້ວຍ
ຕຸ່ມຝີຢ່າງຮ້າຍແຮງ [7]ເມື່ອຊາວເມືອງ ອາຊະໂດດ ໄດ້ເຫັນເຫດການຢ່າງນັ້ນພວກເຂົາຈຶ່ງກ່າວວ່າ
"ຢ່າໃຫ້ຫີບຂອງ ພຣະເຈົ້າ ແຫ່ງຊາວ ອິສຣາເອນ ຢູ່ກັບພວກເຮົາເລີຍ ເພາະວ່າພຣະຫັດຂອງ
ພຣະອົງຢູ່ເໜືອພວກເຮົາ ແລະຢູ່ເໜືອພະດາໂກນ ພະຂອງພວກເຮົາຢ່າງຮ້າຍແຮງ."
[8]ສະນັ້ນພວກເຂົາຈຶ່ງໃຊ້ຄົນໄປເອີ້ນບັນດາເຈົ້ານາຍທັງຫລາຍຂອງພວກ ຟີລິດສະຕິນ ມາປະ-
ຊຸມກັນ ແລະກ່າວວ່າ "ເຮົາຈະເຮັດຢ່າງໃດກັບຫີບຄຳສັນຍາຂອງ ພຣະເຈົ້າ ແຫ່ງຊາວ ອິສຣາ-
ເອນ ນີ້" ພວກເຂົາຕອບວ່າ "ໃຫ້ພວກເຮົານຳຫີບຄຳສັນຍາຂອງ ພຣະເຈົ້າ ຂອງຊາວ ອິສຣາເອນ
ໄປຍັງເມືອງ ກັດ" ດັ່ງນັ້ນ ພວກເຂົາຈຶ່ງນຳຫີບຄຳສັນຍາຂອງ ພຣະເຈົ້າ ແຫ່ງຊາວ ອິສຣາເອນ ໄປ
ບ່ອນນັ້ນ.
[9]ເມື່ອພວກເຂົາໄດ້ນຳຫີບຄຳສັນຍາໄປເມືອງ ກັດ, ພຣະຫັດຂອງ ພຣະຜູ້ເປັນເຈົ້າ ໄດ້ລົງໂທດ
ເມືອງນັ້ນ ໂດຍເຮັດໃຫ້ເກີດມີຄວາມສັບສົນວຸ້ນວາຍຢ່າງໃຫຍ່ຫລວງ ແລະ ພຣະເຈົ້າ ໄດ້ຊ້ຽນຕີ
ຊາວເມືອງນັ້ນ ທັງເດັກນ້ອຍ ແລະຜູ້ໃຫຍ່ ຄືໃຫ້ພວກເຂົາເປັນຕຸ່ມຝີຂັ້ນຮ້າຍແຮງ. [10]ເມື່ອເປັນ
ເຊັ່ນນັ້ນ ພວກເຂົາຈຶ່ງສົ່ງຫີບຄຳສັນຍາຂອງ ພຣະເຈົ້າ ໄປຍັງເມືອງ ເອັກໂຣນ ແລະຢູ່ມາ ເມື່ອ
ຫີບຄຳສັນຍາຂອງ ພຣະເຈົ້າ ມາເຖິງ ເມືອງ ເອັກໂຣນ ແລ້ວ ຊາວ ເມືອງ ເອັກໂຣນ ກໍຮ້ອງຂຶ້ນວ່າ
"ພວກເຂົາໄດ້ນຳຫີບຄຳສັນຍາຂອງ ພຣະເຈົ້າ ຂອງຊາວ ອິສຣາເອນ ມາໃຫ້ເຮົາເພື່ອຈະຂ້າພວກ
ເຮົາ ແລະປະຊາຊົນຂອງພວກເຮົາ" [11]ເພາະສະນັ້ນ ພວກເຂົາຈຶ່ງສົ່ງຄົນໄປເອີ້ນເຈົ້ານາຍຂອງ
ຄົນ ຟີລິດສະຕິນ ທັງໝົດມາປະຊຸມ ແລະກ່າວວ່າ "ຈົ່ງສົ່ງຫີບຄຳສັນຍາຂອງ ພຣະເຈົ້າ ແຫ່ງຊາວ
ອິສຣາເອນ ໄປແລະນຳເອົາຫີບນັ້ນກັບໄປໄວ້ບ່ອນເກົ່າສາ, ເພື່ອຫີບນັ້ນຈະ ບໍ່ຂ້າພວກເຮົາ ແລະ
ປະຊາຊົນຂອງພວກເຮົາ" ເພາະວ່າທົ່ວທັງເມືອງມີຄວາມສັບສົນວຸ້ນວາຍຫລາຍ, ພຣະຫັດຂອງ
ພຣະເຈົ້າ ທີ່ຢູ່ບ່ອນນັ້ນກໍໜັກຫລາຍ [12]ຈຳນວນຄົນທີ່ເຫລືອຕາຍກໍເປັນຕຸ່ມຝີຂັ້ນຮ້າຍແຮງ ແລະ
ສຽງຮ້ອງຂອງຊາວເມືອງນັ້ນກໍຂຶ້ນໄປສູ່ສະຫວັນຊັ້ນຟ້າ.

# ບົດທີ 6

## ຄົນຟີລິດສະຕິນສົ່ງຫີບຄຳສັນຍາໄປຫາໂຢຊວຍຊາວເບັດ-ເຊເມດ

[1]ຫີບ ຄຳ ສັນຍາ ຂອງ ພຣະຜູ້ເປັນເຈົ້າ ໄດ້ຢູ່ໃນປະເທດຂອງຄົນ ຟີລິດສະຕິນ ເປັນ ເວລາ ເຈັດ
ເດືອນ [2]ຄົນ ຟີລິດສະຕິນ ກໍເຊີນພວກປະໂລຫິດ ແລະພວກໂຫລາຈານ[ກ] ມາ ແລະຖາມວ່າ
"ພວກເຮົາຄວນຈະ ເຮັດຢ່າງໃດກັບຫີບຄຳສັນຍາຂອງ ພຣະຜູ້ເປັນເຈົ້າ? ຂໍບອກພວກເຮົາແດ່
ວ່າຈະສົ່ງຫີບກັບໄປໄວ້ຢູ່ບ່ອນເກົ່າໄດ້ຢ່າງໃດ?"
[3]ພວກເຂົາຕອບວ່າ "ຖ້າທ່ານທັງຫລາຍຈະສົ່ງຫີບຄຳສັນຍາຂອງ ພຣະເຈົ້າ ແຫ່ງຊາວ ອິສຣາ-
ເອນ ກັບຄືນໄປນັ້ນຢ່າໄດ້ໄປດ້ວຍມືເປົ່າ, ຢ່າລືມເອົາເຄື່ອງບູຊາໄຖ່ໂທດບາບໄປນຳ ເພື່ອຖວາຍ
ແກ່ ພຣະຜູ້ເປັນເຈົ້າ ແລ້ວພວກທ່ານຈະຫາຍຈາກພະຍາດທີ່ເປັນຢູ່ ແລະພວກທ່ານຈະຮູ້ວ່າ

[ກ]ໝໍທຳນວາຍ

ຍ້ອນສາຍເຫດໃດພຣະຫັດຂອງພຣະອົງຈຶ່ງບໍ່ຍົກຍ້າຍໜີໄປຈາກພວກທ່ານ” 4ແລະພວກເຂົາ
ຖາມວ່າ “ພວກເຮົາຈະເອົາຫຍັງເປັນເຄື່ອງບູຊາໄຖ່ໂທດບາບທີ່ພວກເຮົາຄວນຈະຕ້ອງຖວາຍແກ່
ພຣະອົງ? “ພວກເຂົາຕອບວ່າ “ເຮັດຮູບຕຸ່ມຝີຂັ້ນຮ້າຍແຮງທີ່ເປັນທອງຄຳຫ້າຮູບ ແລະຮູບໜູ
ເຮັດດ້ວຍທອງຄຳຫ້າຮູບຕາມຈຳນວນເຈົ້ານາຍຂອງຄົນ ຟີລິດສະຕິນ ເພາະວ່າໂຣກລະບາດ
ຊະນິດດຽວກັນໄດ້ມາທຳລາຍພວກທ່ານ ແລະເຈົ້ານາຍຂອງພວກທ່ານ.

5ທ່ານຕ້ອງເຮັດຮູບຕຸ່ມຝີຂັ້ນຮ້າຍແຮງຂອງທ່ານ ແລະຮູບໜູທີ່ໄດ້ທຳລາຍປະເທດຂອງພວກ
ທ່ານ ແລະຈົ່ງຖວາຍສະຫງ່າລາສີແດ່ພຣະເຈົ້າຂອງຊາວອິສຣາເອນ ເຫດວ່າພຣະອົງຈະໂຜດ
ໃຫ້ພຣະຫັດຂອງພຣະອົງເບົາໄປຈາກພວກທ່ານ, ຈາກຮູບພະທັງຫລາຍ ແລະປະເທດຂອງ
ພວກທ່ານ 6ເປັນຫຍັງພວກທ່ານຈຶ່ງມີຈິດໃຈທີ່ແຂງກະດ້າງເໝືອນກັບຊາວເອຢິບ ແລະກະສັດ
ຟາຣາໂອ; ເມື່ອພຣະເຈົ້າໄດ້ສະແດງລິດເດດອຳນາດໃນທ່າມກາງພວກເຂົາ ແລ້ວພວກເຂົາກໍ
ໄດ້ປ່ອຍໃຫ້ປະຊາຊົນພວກນັ້ນໄປ ແລະພວກເຂົາທັງຫລາຍກໍຈາກໄປ ບໍ່ແມ່ນບໍ? 7ບັດນີ້ ຈົ່ງ
ຕຽມເອົາກວຽນໃໝ່ເຫລັ້ມໜຶ່ງມາຫຽມເຂົ້າກັບແມ່ງົວຄູ່ໜຶ່ງຊຶ່ງລູກຂອງມັນກຳລັງກິນນົມຢູ່ ຍັງບໍ່
ເຄີຍເຂົ້າ ຫຽມແອກມາຈັກເທື່ອ, ຈົ່ງເອົາແມ່ງົວມາຫຽມກວຽນແລ້ວເອົາລູກຂອງມັນຂັງໄວ້ໃນ
ຄອກໃຫ້ພົ້ນຈາກແມ່ຂອງມັນ 8ຈົ່ງເອົາຫີບຄຳສັນຍາຂອງພຣະຜູ້ເປັນເຈົ້າວາງໄວ້ເທິງກວຽນ
ແລະວາງເຄື່ອງທອງຄຳຊຶ່ງທ່ານທັງຫລາຍຈະຖວາຍບູຊາໄຖ່ໂທດບາບນັ້ນໄວ້ໃນຫີບນ້ອຍໜ່ວຍ
ໜຶ່ງແລະວາງໄວ້ທາງຂ້າງຫີບຄຳສັນຍາ ແລ້ວປ່ອຍໃຫ້ມັນໄປ 9ແລະພວກທ່ານຈົ່ງສັງເກດເບິ່ງ
ວ່າ ຖ້າກວຽນນັ້ນຂຶ້ນໄປທາງເຂດແດນຂອງມັນເອງໄປຫາເມືອງເບັດ-ເຊເມັດກໍແມ່ນ ພຣະເຈົ້າ
ໄດ້ເຮັດເຫດການອັນຕະລາຍທີ່ຮ້າຍແຮງແກ່ພວກເຮົາ, ຖ້າບໍ່ເປັນໄປຕາມນັ້ນ ພວກເຮົາກໍຈະຮູ້
ວ່າບໍ່ແມ່ນພຣະຫັດຂອງພຣະອົງທີ່ໄດ້ຕີພວກເຮົາ ແຕ່ວ່າເປັນເຫດຮ້າຍທີ່ໄດ້ບັງເກີດຂຶ້ນແກ່ພວກ
ເຮົາເອງ.”

10ຄົນເຫລົ່ານັ້ນກໍປະຕິບັດຕາມ ໂດຍນຳເອົາແມ່ງົວຄູ່ໜຶ່ງມາຫຽມເຂົ້າກັບກວຽນ ແລ້ວຂັງລູກ
ຂອງມັນໄວ້ໃນຄອກ 11ແລະພວກເຂົາກໍວາງຫີບຄຳສັນຍາຂອງພຣະຜູ້ເປັນເຈົ້າໄວ້ເທິງກວຽນ
ພ້ອມກັບຫີບນ້ອຍທີ່ມີຮູບໜູຄຳ ແລະຮູບຝີທີ່ພວກເຂົາເປັນ 12ແມ່ງົວກໍຍ່າງຊື່ໄປຕາມທາງມຸ້ງໜ້າ
ໄປສູ່ເມືອງ ເບັດ-ເຊເມັດ ໂດຍຍ່າງໄປຕາມທາງເສັ້ນດຽວທັງຍ່າງທັງຮ້ອງແລະ ມັນບໍ່ໄດ້ລ້ຽວ
ຂວາບໍ່ໄດ້ລ້ຽວຊ້າຍ, ບັນດາເຈົ້ານາຍຂອງຄົນ ຟີລິດສະຕິນກໍຕິດຕາມແມ່ງົວນັ້ນໄປຈົນຮອດເຂດ
ແດນເມືອງ ເບັດ-ເຊເມັດ.

13ຝ່າຍຊາວເມືອງ ເບັດ-ເຊເມັດກຳລັງພາກັນກ່ຽວເຂົ້າຢູ່ຕາມຮ່ອມພູ, ເມື່ອພວກເຂົາເງີຍໜ້າ
ຂຶ້ນກໍເຫັນຫີບຄຳສັນຍາຂອງພຣະເຈົ້າ, ພວກເຂົາພາກັນຊື່ນຊົມຍິນດີເມື່ອໄດ້ເຫັນຫີບນັ້ນ
14ກວຽນນັ້ນໄດ້ເຂົ້າໄປຮອດນາຂອງທ່ານໂຢຊວຍຊາວ ເບັດ-ເຊເມັດ ແລະຢຸດຢູ່ໃກ້ໂງ່ນຫີນ
ໃຫຍ່ກ້ອນໜຶ່ງທີ່ຢູ່ບ່ອນນັ້ນ ແລະພວກເຂົາໄດ້ມ້າງເອົາໄມ້ກວຽນເພື່ອເປັນຟືນ ແລະຂ້າແມ່ງົວ
ເປັນເຄື່ອງເຜົາບູຊາຖວາຍແກ່ພຣະຜູ້ເປັນເຈົ້າ. 15ແລະຄົນ ເລວີ ໄດ້ເອົາຫີບຄຳສັນຍາຂອງ
ພຣະຜູ້ເປັນເຈົ້າລົງມາ ແລະຫີບນ້ອຍທີ່ຢູ່ທາງຂ້າງຊຶ່ງມີເຄື່ອງທອງຄຳ ແລະພວກເຂົາໄດ້ວາງ
ຫີບທັງສອງເທິງໂງ່ນຫີນໃຫຍ່ ແລ້ວຊາວ ເບັດ-ເຊເມັດກໍຖວາຍເຄື່ອງເຜົາບູຊາ ແລະຖວາຍ

ເຄື່ອງບູຊາອື່ນໆແກ່ພຣະຜູ້ເປັນເຈົ້າໃນມື້ນັ້ນ 16ແລະເມື່ອເຈົ້ານາຍຂອງຄົນຟີລິດສະຕິນຫ້າຄົນ
ນັ້ນໄດ້ເຫັນເຫດການນັ້ນແລ້ວ ພວກເຂົາກໍກັບຄືນໄປເມືອງເອັກໂຣນໃນມື້ນັ້ນ.

17ຄຳທີ່ເປັນຮູບຕຸ່ມຝີຫ້າຮູບຊຶ່ງພວກຟີລິດສະຕິນຖວາຍເປັນເຄື່ອງບູຊາໄຖ່ໂທດບາບແກ່
ພຣະຜູ້ເປັນເຈົ້າສຳລັບຫ້າເມືອງຄື: ເມືອງອາຊະໂດດ, ເມືອງຄາຊາ, ເມືອງອາຊະກາໂລນ,
ເມືອງກັດ, ເມືອງເອັກໂຣນ. 18ສ່ວນຮູບໜູຄຳແມ່ນສຳລັບເມືອງຂອງພວກຟີລິດສະຕິນທີ່ເປັນ
ເມືອງຂອງເຈົ້ານາຍທັງຫ້າຕັ້ງແຕ່ເມືອງທີ່ມີກຳແພງອ້ອມຈົນຮອດບັນດາບ້ານນອກ ແລະຈົນ
ຮອດໂງ່ນຫີນໃຫຍ່ແຫ່ງອາເບັນທີ່ພວກເຂົາໄດ້ປົງຫີບຄຳສັນຍາຂອງພຣະຜູ້ເປັນເຈົ້າໄວ້; ຫີນ
ນັ້ນກໍຍັງຢູ່ທີ່ໃນທົ່ງນາຂອງໂຢຊວຍຊາວເບັດ-ເຊເມັດຈົນຮອດທຸກມື້ນີ້.

19ພຣະຜູ້ເປັນເຈົ້າໄດ້ໂຈມຕີຊາວເບັດ-ເຊເມັດ ເພາະວ່າພວກເຂົາໄດ້ເບິ່ງຂ້າງຫີບຄຳສັນຍາ
ຂອງພຣະຜູ້ເປັນເຈົ້າ ພຣະເຈົ້າໄດ້ປະຫານຊີວິດພວກເຂົາເຈັດສິບຄົນຈາກພວກນັ້ນ ແລະປະ-
ຊາຊົນກໍຮ້ອງໄຫ້ໂສກເສົ້າໄວ້ທຸກເພາະພຣະຜູ້ເປັນເຈົ້າໄດ້ປະຫານຊີວິດປະຊາຊົນເປັນຈຳນວນ
ຫລາຍ 20ແລ້ວຊາວເບັດ-ເຊເມັດຈຶ່ງກ່າວວ່າ "ຜູ້ໃດສາມາດຢືນຢູ່ຕໍ່ພຣະພັກພຣະຜູ້ເປັນເຈົ້າ
ພຣະເຈົ້າອົງບໍລິສຸດອົງນີ້ໄດ້ ແລະຈາກບ່ອນນີ້ພຣະອົງຈະສະເດັດໄປຫາຜູ້ໃດ?"

21ດັ່ງນັ້ນພວກເຂົາຈຶ່ງສົ່ງຜູ້ສົ່ງຂ່າວໄປຫາຊາວເມືອງກີຣີຢາດ-ເຢອາຣິມວ່າ "ຄົນຟີລິດສະ-
ຕິນໄດ້ສົ່ງຫີບຂອງພຣະຜູ້ເປັນເຈົ້າຄືນມາແລ້ວ ຈົ່ງລົງມາເອົາຫີບຄຳສັນຍາຂຶ້ນໄປຢູ່ນຳພວກ
ທ່ານສາ."

# ບົດທີ 7

## ຊາມູເອນປົກຄອງປະເທດອິສຣາເອນ

1ຊາວເມືອງກີຣີຢາດ-ເຢອາຣິມໄດ້ເອົາຫີບຄຳສັນຍາຂອງພຣະຜູ້ເປັນເຈົ້າໄປໄວ້ໃນເຮືອນ
ຂອງອາບີນາດາບ ຢູ່ເທິງພູນ້ອຍ ພວກເຂົາໄດ້ສະຖາປານາ ເອເລອາຊາ ລູກຊາຍຂອງລາວ
ໃຫ້ເປັນຜູ້ຮັບໜ້າທີ່ເບິ່ງແຍງຫີບຄຳສັນຍານີ້.

2ຫີບຄຳສັນຍາຂອງພຣະຜູ້ເປັນເຈົ້າໄດ້ຖືກຮັກສາໄວ້ຢູ່ທີ່ເມືອງກີຣີຢາດ-ເຢອາຣິມເປັນເວລາ
ດົນນານເຖິງຊາວປີ ໃນເວລານັ້ນ ຊາວອິສຣາເອນທຸກຄົນໄດ້ຮ້ອງໄຫ້ຄໍ່າຄວນ ຂໍຄວາມຊ່ອຍ
ເຫລືອຈາກພຣະຜູ້ເປັນເຈົ້າ. 3ຊາມູເອນຈຶ່ງເວົ້າຕໍ່ຊາວອິສຣາເອນວ່າ, "ຖ້າພວກເຈົ້າຈະກັບຄືນ
ມາຫາພຣະຜູ້ເປັນເຈົ້າດ້ວຍຄວາມເຕັມໃຈ ພວກເຈົ້າຕ້ອງກຳຈັດພະຕ່າງໆ ຂອງຊາວຕ່າງດ້າວ
ແລະຮູບພະອັດຊະໂຕເຣດນັ້ນເສຍ ແລ້ວຈົ່ງອຸທິດຕົນຖວາຍແດ່ພຣະຜູ້ເປັນເຈົ້າ ແລະນະມັດ-
ສະການພຣະອົງເທົ່ານັ້ນ ພຣະອົງຈະຊ່ອຍຊີວິດພວກເຈົ້າໃຫ້ພົ້ນຈາກອຳນາດຂອງພວກຟີລິດ-
ສະຕິນ." 4ດັ່ງນັ້ນ ພວກອິສຣາເອນຈຶ່ງທຳລາຍຮູບພະບາອານ ແລະຮູບພະອັດຊະໂຕເຣດ
ຂອງພວກເຂົາ ແລ້ວໄດ້ນະມັດສະການແຕ່ພຣະຜູ້ເປັນເຈົ້າເທົ່ານັ້ນ.

5ແລ້ວຊາມູເອນກໍບອກຊາວອິສຣາເອນທຸກຄົນວ່າ, "ຂໍໃຫ້ພວກເຈົ້າທຸກຄົນໄປໂຮມກັນຢູ່ທີ່
ເມືອງມິດຊະປາ ແລະຢູ່ບ່ອນນັ້ນ ຂ້ອຍຈະອ້ອນວອນຂໍພຣະຜູ້ເປັນເຈົ້າສຳລັບພວກເຈົ້າ."
6ດັ່ງນັ້ນ ພວກເຂົາທຸກຄົນຈຶ່ງໄປໂຮມກັນຢູ່ທີ່ເມືອງມິດຊະປາ ພວກເຂົາໄດ້ຕັກເອົານໍ້າ ແລະ

ຖອກຖວາຍແກ່ພຣະຜູ້ເປັນເຈົ້າ ແລະຖືສິນອົດອາຫານຕະຫລອດມື້ ພວກເຂົາເວົ້າວ່າ, “ພວກ
ຂ້ານ້ອຍໄດ້ເຮັດຜິດຕໍ່ພຣະຜູ້ເປັນເຈົ້າແລ້ວ” ສ່ວນຊາມູເອນກໍຢູ່ທີ່ເມືອງມິດຊະປາ ແລະປົກ-
ຄອງຊາວອິສຣາເອນຢູ່ບ່ອນນັ້ນ.
7ເມື່ອພວກຟີລິດສະຕິນ ໄດ້ຍິນຂ່າວວ່າພວກອິສຣາເອນທ້ອນໂຮມກັນຢູ່ທີ່ເມືອງມິດຊະປາ
ຫົວໜ້າຊາວຟີລິດສະຕິນ ພ້ອມທັງທະຫານຈຳນວນໜຶ່ງກໍຖຽມອອກໄປໂຈມຕີພວກເຂົາ ເມື່ອ
ພວກອິສຣາເອນໄດ້ຍິນຂ່າວເລື່ອງນີ້ກໍພາກັນຢ້ານກົວ. 8ແລະເວົ້າຕໍ່ຊາມູເອນວ່າ, “ຈົ່ງອ້ອນ-
ວອນຫາພຣະຜູ້ເປັນເຈົ້າຂອງພວກເຮົາ ເພື່ອພຣະອົງຈະຊ່ອຍພວກເຮົາໃຫ້ພົ້ນຈາກການໂຈມຕີ
ຂອງພວກຟີລິດສະຕິນ.” 9ຊາມູເອນໄດ້ຂ້າແກະນ້ອຍ ແລະເຜົາໝົດທັງໂຕຖວາຍແກ່ພຣະຜູ້-
ເປັນເຈົ້າ ເພິ່ນໄດ້ອ້ອນວອນຂໍພຣະຜູ້ເປັນເຈົ້າໃຫ້ຊ່ອຍເຫລືອພວກອິສຣາເອນ ແລະພຣະຜູ້-
ເປັນເຈົ້າກໍຊົງຕອບຄຳອ້ອນວອນຂອງເພິ່ນ.
10ໃນຂະນະທີ່ຊາມູເອນກຳລັງຖວາຍເຄື່ອງບູຊາຢູ່ນັ້ນ ຊາວຟີລິດສະຕິນກໍເຄື່ອນທັບເຂົ້າມາ
ໂຈມຕີ ແຕ່ພຣະຜູ້ເປັນເຈົ້າຊົງເຮັດໃຫ້ພວກເຂົາໄດ້ຍິນສຽງຟ້າຮ້ອງອັນໜ້າຢ້ານ ພວກເຂົາຈຶ່ງ
ສັບສົນວຸ້ນວາຍ ແລະຜ່າຍແພ້ໜີໄປ. 11ພວກອິສຣາເອນ ກໍຍົກຂະບວນອອກມາຈາກເມືອງ
ມິດຊະປາ ໄລ່ຕິດຕາມພວກເຂົາຈົນໄປຮອດບ້ານ ເບັດ-ຄາ ແລະຂ້າພວກເຂົາຕາຍຢາຍໄປ
ຕາມທາງ.
12ແລ້ວຊາມູເອນຈຶ່ງເອົາກ້ອນຫີນໜຶ່ງກ້ອນມາຕັ້ງຂຶ້ນຢູ່ລະຫວ່າງເມືອງມິດຊະປາ ແລະ
ເມືອງເຊນ ແລ້ວເວົ້າວ່າ, “ພຣະຜູ້ເປັນເຈົ້າຊົງຊ່ອຍເຫລືອພວກຂ້ານ້ອຍມາຈົນຮອດບ່ອນນີ້”
ດັ່ງນັ້ນ ເພິ່ນຈຶ່ງໃສ່ຊື່ກ້ອນຫີນນັ້ນວ່າເອເບັນເອເຊ ໝາຍຄວາມວ່າ “ກ້ອນຫີນຊ່ອຍເຫລືອ”
13ພວກຟີລິດສະຕິນຜ່າຍແພ້ ແລະພຣະຜູ້ເປັນເຈົ້າກໍບໍ່ໃຫ້ພວກເຂົາບຸກລຸກເຂດແດນຂອງຊາວ
ອິສຣາເອນອີກ ໃນເວລາທີ່ຊາມູເອນຍັງມີຊີວິດຢູ່.
14ທຸກໆ ຫົວເມືອງຕັ້ງແຕ່ເມືອງເອັກໂຣນຈົນຮອດເມືອງກັດ ບ່ອນທີ່ພວກຟີລິດສະຕິນຍຶດ
ເອົາໄປນັ້ນ ກໍໄດ້ກັບຄືນມາເປັນຂອງພວກອິສຣາເອນ ແລະ ຊາວອິສຣາເອນກໍໄດ້ເຂດແດນ
ຂອງພວກເຂົາຄືນໝົດແລ້ວ ຄວາມສະຫງົບສຸກຈຶ່ງເກີດຂຶ້ນລະຫວ່າງຊາວອິສຣາເອນ ແລະ
ຊາວການາອານ. 15ຊາມູເອນໄດ້ປົກຄອງອິສຣາເອນຕະຫລອດຊົ່ວຊີວິດຂອງເພິ່ນ. 16ທຸກໆ
ປີເພິ່ນຕ້ອງໄປເມືອງເບັດເອນ ເມືອງກິນການ ແລະເມືອງມິດຊະປາ ເພາະເພິ່ນມີໜ້າທີ່ປົກ-
ຄອງໃນເມືອງເຫລົ່ານີ້. 17ແລ້ວເພິ່ນໄດ້ກັບຄືນເມືອເຮືອນຂອງເພິ່ນທີ່ເມືອງຣາມາ ໃນເມືອງນີ້
ເພິ່ນເປັນຜູ້ປົກຄອງເຊັ່ນດຽວກັນ ແລະເພິ່ນໄດ້ສ້າງແທ່ນບູຊາຖວາຍແກ່ພຣະຜູ້ເປັນເຈົ້າໄວ້ໃນທີ່
ນັ້ນດ້ວຍ.

# ບົດທີ 8

## ປະຊາຊົນຮ້ອງຂໍເອົາເຈົ້າຊີວິດ

1ເມື່ອຊາມູເອນເຖົ້າແກ່ແລ້ວ ເພິ່ນໃຫ້ລູກຊາຍຂອງເພິ່ນປົກຄອງປະເທດອິສຣາເອນແທນ.
2ຜູ້ອ້າຍຊື່ວ່າ ໂຢເອນ ແລະຜູ້ນ້ອງຊື່ວ່າອາບີຢາ ພວກເຂົາທັງສອງປົກຄອງທີ່ເມືອງເບເອ-ເຊ-

ບາ. 3ແຕ່ວ່າພວກເຂົາບໍ່ປະພຶດຕາມແບບຢ່າງຂອງພໍ່ ພວກເຂົາສົນໃຈນຳແຕ່ເລື່ອງເງິນຄຳເທົ່າ
ນັ້ນ ພວກເຂົາຮັບເອົາສິນບົນ ແລະບໍ່ໄດ້ຕັດສິນຄວາມຢ່າງສັດຊື່.
4ແລ້ວພວກເຈົ້ານາຍ ອິສຣາເອນ ທຸກຄົນກໍປະຊຸມກັນ ແລ້ວພາກັນໄປຫາ ຊາມູເອນ ທີ່ເມືອງ
ຣາມາ ແລະເວົ້າຕໍ່ເພິ່ນວ່າ, 5“ທ່ານເອີຍ ທ່ານກໍເຖົ້າແກ່ຫລາຍແລ້ວ ລູກຊາຍຂອງທ່ານບໍ່ໄດ້
ປະພຶດຕາມແບບຢ່າງຂອງທ່ານເລີຍ ສະນັ້ນ ຂໍທ່ານຈົ່ງແຕ່ງຕັ້ງເຈົ້າຊີວິດໃຫ້ເປັນຜູ້ປົກຄອງ
ພວກຂ້ານ້ອຍ ເໝືອນດັ່ງປະເທດອື່ນໆ ທີ່ພວກເຂົາປົກຄອງກັນ.
6ຊາມູເອນ ໄດ້ເສຍໃຈໃນເລື່ອງທີ່ພວກເຂົາໄດ້ຮ້ອງຂໍເອົາເຈົ້າຊີວິດ ດັ່ງນັ້ນ ເພິ່ນຈຶ່ງອ້ອນ-
ວອນຫາ ພຣະຜູ້ເປັນເຈົ້າ. 7ແລະ ພຣະຜູ້ເປັນເຈົ້າ ກໍຊົງກ່າວວ່າ, “ຈົ່ງຟັງທຸກສິ່ງທີ່ປະຊາຊົນເວົ້າ
ຕໍ່ເຈົ້າ ພວກເຂົາບໍ່ໄດ້ປະຖິ້ມເຈົ້າ ແຕ່ໄດ້ປະຖິ້ມເຮົາຕ່າງຫາກ ໂດຍບໍ່ຍອມໃຫ້ເຮົາເປັນເຈົ້າຊີວິດ
ຂອງພວກເຂົາຕໍ່ໄປ. 8ນັບຕັ້ງແຕ່ເຮົາໄດ້ນຳພວກເຂົາອອກມາຈາກປະເທດ ເອຢິບ ພວກເຂົາໄດ້
ຫ່າງເຫີນຈາກເຮົາ ແລະໄປນະມັດສະການພະອື່ນ ດຽວນີ້ ພວກເຂົາກຳລັງປະພຶດຕໍ່ເຮົາດັ່ງທີ່
ພວກເຂົາເຄີຍໄດ້ປະພຶດຢູ່ເລື້ອຍໆ. 9ສະນັ້ນ ຈົ່ງເຮັດຕາມທີ່ພວກເຂົາຂໍ ແຕ່ຈົ່ງຕັກເຕືອນພວກ
ເຂົາຢ່າງໜັກແໜ້ນ ແລະອະທິບາຍໃຫ້ພວກເຂົາຮູ້ວ່າ ເຈົ້າຊີວິດເຫລົ່ານັ້ນຈະປົກຄອງພວກເຂົາ
ຢ່າງໃດ?”
10ຊາມູເອນ ຈຶ່ງບອກທຸກໆ ສິ່ງແກ່ປະຊາຊົນທີ່ຢາກມີເຈົ້າຊີວິດນັ້ນ ຕາມທີ່ ພຣະຜູ້ເປັນເຈົ້າ
ຊົງບອກໄວ້ກັບເພິ່ນ. 11ຊາມູເອນ ເວົ້າວ່າ “ເຈົ້າຊີວິດຂອງພວກເຈົ້າຈະປົກຄອງພວກເຈົ້າດັ່ງນີ້
ພະອົງຈະເອົາລູກຊາຍຂອງພວກເຈົ້າໄປເປັນທະຫານ ບາງຄົນຈະຂັບລົດຮົບ ບາງຄົນຈະເປັນ
ທະຫານມ້າ ແລະເປັນທະຫານໜ່ວຍກ້າຕາຍ. 12ພະອົງຈະແຕ່ງຕັ້ງເອົາບາງຄົນໃຫ້ເປັນນາຍພັນ
ບາງຄົນເປັນນາຍຮ້ອຍ ລູກຊາຍຂອງພວກເຈົ້າຈະຕ້ອງໄຖນາ ກ່ຽວເຂົ້າໃຫ້ເພິ່ນ ແລະເຮັດອາ-
ວຸດ ກັບເຄື່ອງຮົບປະຈຳລົດຮົບຂອງພະອົງດ້ວຍ. 13ສ່ວນລູກສາວຂອງພວກເຈົ້າຈະຕ້ອງແຕ່ງ
ນ້ຳຫອມເຮັດວຽກເປັນແມ່ຄົວ ແລະເປັນຜູ້ເຮັດຂະໜົມ. 14ພະອົງຈະເອົາທົ່ງນາທີ່ດີທີ່ສຸດ ເອົາ
ສວນອະງຸ່ນຂອງເຈົ້າໃຫ້ແກ່ນາຍທະຫານ ແລະບັນດາຂ້າລາຊະການຂອງພະອົງ. 15ພະອົງຈະ
ຫັກເອົາໜຶ່ງສ່ວນສິບຂອງເຂົ້າ ແລະໝາກອະງຸ່ນຂອງເຈົ້າໃຫ້ແກ່ນາຍທະຫານ ແລະບັນດາຂ້າ-
ລາຊະການອື່ນໆ ຂອງພະອົງ. 16ພະອົງຈະເອົາພວກຄົນໃຊ້ກັບຝູງງົວທີ່ງາມ ແລະຝູງລໍຂອງ
ພວກເຈົ້າມາໃຊ້ເຮັດວຽກສຳລັບພະອົງ. 17ພະອົງຈະຫັກເອົາໜຶ່ງສ່ວນສິບຈາກຝູງສັດຂອງພວກ
ເຈົ້າ ພວກເຈົ້າຈະເປັນທາດຂອງພະອົງ. 18ເມື່ອເວລານັ້ນມາເຖິງ ພວກເຈົ້າຈະຄວນຄາງຢ່າງ
ແສນສາຫັດຍ້ອນເຈົ້າຊີວິດທີ່ພວກເຈົ້າເລືອກເອົາເອງນັ້ນ ແຕ່ ພຣະຜູ້ເປັນເຈົ້າ ຈະບໍ່ຟັງຄຳຮ້ອງ
ຂອງພວກເຈົ້າ.”
19ຝ່າຍປະຊາຊົນບໍ່ໄດ້ຟັງຄວາມຂອງ ຊາມູເອນ ພວກເຂົາພາກັນຕອບວ່າ, “ບໍ່! ພວກຂ້າ-
ນ້ອຍຕ້ອງການເຈົ້າຊີວິດ. 20ເພື່ອວ່າພວກຂ້ານ້ອຍຈະກາຍເປັນເໝືອນຊົນຊາດອື່ນ ແລະເພື່ອວ່າ
ເຈົ້າຊີວິດຂອງພວກຂ້ານ້ອຍຈະປົກຄອງພວກຂ້ານ້ອຍເອງ ແລະຈະຊົງນຳໜ້າພວກຂ້ານ້ອຍ
ອອກໄປຕີເສິກ.”
21ຊາມູເອນ ໄດ້ຟັງເລື່ອງຕ່າງໆ ທີ່ພວກເຂົາເວົ້າມາແລ້ວ ກໍນຳເອົາເລື່ອງນີ້ທູນຕໍ່ ພຣະຜູ້ເປັນ-

ເຈົ້າ. 22ພຣະຜູ້ເປັນເຈົ້າຊົງຕອບວ່າ, “ຈົ່ງເຮັດໃນສິ່ງທີ່ພວກເຂົາຕ້ອງການ ແລະແຕ່ງຕັ້ງເຈົ້າຊີ-
ວິດໃຫ້ພວກເຂົາ” ແລ້ວຊາມູເອນຈຶ່ງບອກໃຫ້ຊາວອິສຣາເອນທຸກຄົນກັບຄືນເມືອບ້ານ.

## ບົດທີ 9

### ຊາອູນໄປພົບຊາມູເອນ

1ຍັງມີຊາຍຄົນໜຶ່ງຈາກຕະກູນເບັນຢາມິນຊື່ວ່າກີເຊ ເປັນລູກຂອງອາບີເອນ ອາບີເອນເປັນ
ລູກຂອງເຊໂຣ ຫລານຂອງເບໂກຣັດ ແລະເຫລັນຂອງອາຟີຢາ. 2ກີເຊເປັນຄົນທີ່ຮັ່ງມີ ແລະມີ
ຊື່ສຽງ ລາວມີລູກຊາຍຊື່ວ່າຊາອູນ ຊາອູນເປັນຊາຍໜຸ່ມທີ່ສະຫງ່າງາມ ໃນອິສຣາເອນບໍ່ມີໃຜ
ສູງ ແລະງາມເໜືອກວ່າລາວ.

3ເມື່ອລໍຂອງກີເຊໄດ້ເສຍ ລາວຈຶ່ງເວົ້າຕໍ່ຊາອູນວ່າ, “ຈົ່ງໄປຊອກຫາລໍ ແລະນຳເອົາຄົນໃຊ້ຜູ້
ໜຶ່ງໄປນຳ.” 4ພວກເຂົາໄດ້ຜ່ານພູນ້ອຍເມືອງເອຟຣາຢິມ ແລະເຂດແດນຊາລິຊາ ແຕ່ກໍບໍ່ພົບ
ດັ່ງນັ້ນ ພວກເຂົາຈຶ່ງຜ່ານໄປທາງເຂດແດນຊາອາລີມ ແຕ່ກໍບໍ່ພົບອີກ ແລ້ວພວກເຂົາຈຶ່ງຜ່ານ
ໄປທາງເຂດແດນເບັນຢາມິນ ແຕ່ກໍບໍ່ພົບເຊັ່ນກັນ.

5ເມື່ອພວກເຂົາເຂົ້າມາຮອດເຂດແດນຊູບ ຊາອູນຈຶ່ງເວົ້າຕໍ່ຄົນໃຊ້ວ່າ, “ພວກເຮົາພາກັນກັບ
ບ້ານເທາະ! ບາງທີພໍ່ຂ້ອຍອາດເຊົາຄິດເປັນຫ່ວງນຳລໍແລ້ວ ແຕ່ເພິ່ນອາດເປັນຫ່ວງນຳພວກເຮົາ
ຫລາຍກວ່າ.” 6ຄົນໃຊ້ຕອບວ່າ, “ຖ້າກ່ອນ ໃນເມືອງນີ້ຍັງມີຄົນຂອງພຣະເຈົ້າຢູ່ຄົນໜຶ່ງ ຊຶ່ງ
ເປັນຄົນທີ່ໜ້າເຄົາລົບ ແລະນັບຖືທີ່ສຸດ ເພາະວ່າທຸກສິ່ງທີ່ເພິ່ນເວົ້ານັ້ນເປັນຄວາມຈິງ ໃຫ້ພວກ
ເຮົາພາກັນໄປຫາເພິ່ນ ບາງທີເພິ່ນອາດບອກບ່ອນທີ່ລໍຢູ່ ແລະພວກເຮົາກໍຈະພົບມັນໄດ້.” 7ຊາ-
ອູນຖາມຂຶ້ນວ່າ, “ຖ້າພວກເຮົາໄປຫາເພິ່ນ ເຮົາຈະມີຫຍັງໃຫ້ເພິ່ນ ເຂົ້າກໍບໍ່ມີເຫລືອຢູ່ໃນຫໍ່ແລ້ວ
ແລະພວກເຮົາກໍບໍ່ມີຫຍັງຈັກແນວເລີຍທີ່ຈະເອົາໄປໃຫ້ເພິ່ນ ພວກເຮົາຈະເຮັດຢ່າງໃດ?” 8ຄົນໃຊ້
ຕອບວ່າ, “ຂ້ອຍມີເງິນຢູ່ຫລຽນໜຶ່ງພໍທີ່ຈະໃຫ້ເພິ່ນໄດ້ຢູ່ ແລະເພິ່ນກໍຈະບອກບ່ອນທີ່ພວກເຮົາຈະ
ພົບລໍນັ້ນວ່າຢູ່ໃສ.”

9-11ຊາອູນເວົ້າອີກວ່າ, “ເປັນຄວາມຄິດທີ່ດີ ພວກເຮົາພາກັນໄປເທາະ” ດັ່ງນັ້ນ ພວກເຂົາຈຶ່ງ
ໄປຍັງເມືອງບ່ອນທີ່ຄົນຂອງພຣະເຈົ້າຢູ່ ພວກເຂົາໄດ້ພົບຍິງສາວບາງຄົນອອກມາຕັກນໍ້າ ພວກ
ເຂົາຈຶ່ງຖາມຍິງສາວນັ້ນວ່າ “ໝໍທຳນວາຍຢູ່ບໍ?” (ຕັ້ງແຕ່ກ່ອນ ຖ້າມີຄົນຢາກທູນຖາມພຣະເຈົ້າ
ພວກເຂົາຕ້ອງເວົ້າວ່າ, “ພວກເຮົາໄປຫາໝໍທຳນວາຍເທາະ” ເພາະໃນເວລານັ້ນ ພວກເຂົາເອີ້ນ
ຜູ້ປະກາດພຣະທຳວ່າໝໍທຳນວາຍ). 12ພວກຍິງສາວຈຶ່ງຕອບວ່າ, “ແມ່ນແລ້ວ ເພິ່ນຢູ່ນີ້ ເພິ່ນຫາ
ກໍອອກໄປກ່ອນທີ່ພວກທ່ານຈະມາຮອດນີ້ ຈົ່ງພາກັນຟ້າວໄປ ດຽວນີ້ເພິ່ນກຳລັງເຂົ້າໄປໃນເມືອງ
ເພາະວ່າ ມື້ນີ້ປະຊາຊົນກຳລັງໄປຖວາຍເຄື່ອງບູຊາທີ່ແທ່ນບູຊາເທິງພູ. 13ກ່ອນທີ່ເພິ່ນຈະຂຶ້ນໄປ
ເທິງພູ ໃຫ້ພວກທ່ານເຂົ້າໄປໃນເມືອງ ແລະຈະພົບເພິ່ນ ເພາະວ່າ ເພິ່ນຕ້ອງອ້ອນວອນກ່ອນ
ເວລາຖວາຍບູຊາ ແລ້ວຜູ້ທີ່ຮັບເຊີນມາຈຶ່ງຈະກິນໄດ້ ດຽວນີ້ຈົ່ງຂຶ້ນໄປບ່ອນນັ້ນ ແລະພວກທ່ານ
ຈະໄດ້ພົບເພິ່ນໂລດ.

14ດັ່ງນັ້ນ ພວກເຂົາກໍພາກັນໄປໃນເມືອງ ເມື່ອກຳລັງຍ່າງໄປນັ້ນ ພວກເຂົາເຫັນຊາມູເອນ

ກຳລັງຍ່າງອອກມາ ເພື່ອໄປບ່ອນນະມັດສະການ. 15ກ່ອນມື້ທີ່ຊາອູນຈະມາຮອດ ພຣະຜູ້ເປັນ-
ເຈົ້າຊົງບອກຊາມູເອນໄວ້ແລ້ວວ່າ, 16ມື້ອື່ນປະມານເວລາດຽວກັນນີ້ ເຮົາຈະສົ່ງຄົນຜູ້ໜຶ່ງຈາກ
ຕະກູນເບັນຢາມິນມາຫາເຈົ້າ ຈົ່ງເອົານ້ຳມັນຫົດສົງລາວໃຫ້ເປັນເຈົ້າຊີວິດເໜືອໄພ່ພົນອິສຣາ-
ເອນຂອງເຮົາ ແລະລາວຈະຊ່ອຍພວກເຂົາໃຫ້ພົ້ນຈາກພວກຟີລິດສະຕິນ ເພາະເຮົາໄດ້ເຫັນ
ຄວາມທຸກທໍລະມານຂອງໄພ່ພົນຂອງເຮົາ ແລະໄດ້ຍິນການຮ້ອງໄຫ້ຂໍຄວາມຊ່ອຍເຫລືອຈາກ
ພວກເຂົາ.”

17ເມື່ອຊາມູເອນເຫັນຊາອູນ ພຣະຜູ້ເປັນເຈົ້າຈຶ່ງເວົ້າຕໍ່ເພິ່ນວ່າ, “ຄົນນີ້ແລ້ວທີ່ເຮົາໄດ້ບອກ
ໄວ້ກັບເຈົ້າ ລາວຈະປົກຄອງໄພ່ພົນຂອງເຮົາ.” 18ແລ້ວຊາອູນກໍເຂົ້າໄປຫາຊາມູເອນຢູ່ໃກ້ປະຕູ
ເມືອງ ແລະຖາມວ່າ, “ຂໍບອກຂ້ານ້ອຍແດ່ວ່າໝໍທຳນວາຍຢູ່ໃສ?”

19ຊາມູເອນກໍຕອບວ່າ, “ຂ້ອຍນີ້ແຫລະເປັນໝໍທຳນວາຍ ຈົ່ງອອກໄປບ່ອນນະມັດສະການ
ກ່ອນຂ້ອຍເດີ້ ມື້ນີ້ ພວກເຈົ້າທັງສອງຕ້ອງກິນເຂົ້າກັບຂ້ອຍ ມື້ອື່ນເຊົ້າ ຂ້ອຍຈະຕອບຄຳຖາມ
ທຸກຢ່າງຂອງພວກເຈົ້າ ແລ້ວຈະສົ່ງພວກເຈົ້າກັບຄືນເມືອ. 20ສຳລັບລໍນັ້ນເສຍໄປໄດ້ສາມມື້ແລ້ວ
ນັ້ນ ຢ່າຄິດເສຍດາຍນຳມັນ ເພາະວ່າພວກເຂົາໄດ້ພົບມັນແລ້ວ ແຕ່ວ່າ ຜູ້ທີ່ຊາວອິສຣາເອນ
ຕ້ອງການຫລາຍທີ່ສຸດນັ້ນແມ່ນເຈົ້າເອງ ແລະຄອບຄົວພໍ່ແມ່ຂອງເຈົ້າ.”

21ຊາອູນຕອບວ່າ, “ຂ້ານ້ອຍຢູ່ໃນຕະກູນເບັນຢາມິນ ຊຶ່ງເປັນຕະກູນນ້ອຍທີ່ສຸດໃນອິສຣາ-
ເອນ ແລະໃນຕະກູນນັ້ນຄອບຄົວຂອງຂ້ານ້ອຍກໍມີຄວາມສຳຄັນນ້ອຍກວ່າໝູ່ ແຕ່ເປັນຫຍັງ
ທ່ານຈຶ່ງເວົ້າແບບນີ້ກັບຂ້ານ້ອຍ?”

22ແລ້ວຊາມູເອນ ກໍພາຊາອູນພ້ອມທັງຄົນໃຊ້ຂອງລາວເຂົ້າໄປໃນຫ້ອງໃຫຍ່ຫ້ອງໜຶ່ງ ແລະ
ໃຫ້ພວກເຂົານັ່ງຢູ່ທາງຂ້າງໂຕະບ່ອນທີ່ມີແຂກຖືກເຊີນມານັ່ງຢູ່ກ່ອນແລ້ວປະມານສາມສິບຄົນ.
23ຊາມູເອນເວົ້າຕໍ່ຄົນຄົວກິນວ່າ, “ຈົ່ງເອົາຕ່ອນຊີ້ນທີ່ຂ້ອຍບອກໃຫ້ເອົາໄວ້ຕ່າງຫາກນັ້ນມາ.”

24ຜູ້ຄົວກິນກໍເອົາຕ່ອນຂາ ແລະຕ່ອນຊີ້ນທີ່ດີທີ່ສຸດໄປວາງໄວ້ຕໍ່ໜ້າຊາອູນ ແລ້ວຊາມູເອນ
ໄດ້ເວົ້າວ່າ, “ນີ້ແມ່ນສ່ວນທີ່ເອົາໄວ້ໃຫ້ເຈົ້າ ເຊີນກິນສາ ມັນເປັນສ່ວນທີ່ເອົາໄວ້ໃຫ້ເຈົ້າກິນໃນ
ເວລານີ້ ພ້ອມກັບທຸກຄົນທີ່ຖືກເຊີນມາ.”

25ໃນມື້ນັ້ນ ຊາອູນໄດ້ກິນເຂົ້າຮ່ວມກັບຊາມູເອນ ເມື່ອພວກເຂົາລົງຈາກບ່ອນນະມັດສະການ
ມາ ແລະກັບເຂົ້າໄປໃນເມືອງ ກໍມີຄົນຈັດບ່ອນໃຫ້ຊາອູນຢູ່ເທິງຫລັງຄາພຽງ ແລະລາວກໍນອນຢູ່
ທີ່ນັ້ນ.

## ຊາມູເອນເອົານ້ຳມັນຫົດສົງຊາອູນໃຫ້ເປັນກະສັດ

26ຕື່ນເຊົ້າມາ ຊາມູເອນກໍຮ້ອງໃສ່ຊາອູນຢູ່ເທິງຫລັງຄານັ້ນວ່າ, “ຕື່ນແມ ຂ້ອຍຈະສົ່ງເຈົ້າກັບ
ຄືນເມືອ” ຊາອູນລຸກຂຶ້ນ ແລະມຸ່ງໜ້າອອກໄປສູ່ຖະໜົນໃຫຍ່ພ້ອມກັບຊາມູເອນ. 27ເມື່ອພວກ
ເຂົາມາຮອດເຂດແດນເມືອງ ຊາມູເອນຈຶ່ງເວົ້າຕໍ່ຊາອູນວ່າ, “ຈົ່ງບອກໃຫ້ຄົນຂອງເຈົ້າໄປກ່ອນ”
ຄົນໃຊ້ກໍເດີນທາງໄປກ່ອນ ຊາມູເອນຈຶ່ງເວົ້າຕໍ່ໄປວ່າ, “ຢຸດຢູ່ນີ້ຈັກໜ່ອຍກ່ອນເນາະ ແລ້ວຂ້ອຍ
ຈະບອກວ່າ ພຣະຜູ້ເປັນເຈົ້າໄດ້ກ່າວກັບຂ້ອຍຢ່າງໃດ.”

# ບົດທີ 10

[1]ແລ້ວຊາມູເອນ ກໍເອົາເຕົ້ານ້ຳມັນໝາກກອກອອກມາຖອກລົງໃສ່ຫົວຂອງຊາອູນ ເພິ່ນຈູບ
ຊາອູນ ແລ້ວເວົ້າວ່າ, "ພຣະຜູ້ເປັນເຈົ້າຊົງເອົານ້ຳມັນຫົດສົງເຈົ້າໃຫ້ເປັນເຈົ້າຊີວິດເໜືອໄພ່ພົນ
ຂອງພຣະອົງ ເຈົ້າຈະປົກຄອງໄພ່ພົນຂອງພຣະອົງ ແລະຊ່ອຍພວກເຂົາໃຫ້ພົ້ນຈາກສັດຕູຂອງ
ພວກເຂົາ ການທີ່ພຣະຜູ້ເປັນເຈົ້າຊົງເລືອກເອົາເຈົ້າເປັນເຈົ້າຊີວິດໄພ່ພົນຂອງພຣະອົງ ຈະພິສູດ
ໃຫ້ເຫັນໄດ້ດັ່ງນີ້. [2]ມື້ນີ້ ເມື່ອເຈົ້າຈາກຂ້ອຍໄປແລ້ວ ເຈົ້າຈະພົບຊາຍສອງຄົນໃກ້ຂຸມຝັງສົບຂອງ
ຣາເຄນຢູ່ເຊັນຊາໃນເຂດແດນເບັນຢາມິນ ພວກເຂົາຈະບອກເຈົ້າວ່າ ລໍທີ່ເຈົ້າກຳລັງຊອກຫາ
ນັ້ນເຫັນແລ້ວ ແລະພໍ່ຂອງເຈົ້າບໍ່ໄດ້ເປັນທຸກກັງວົນຢ່າງໃດກ່ຽວກັບລໍ ແຕ່ວ່າຄິດເປັນຫ່ວງນຳ
ເຈົ້າແລະຖາມສະເໝີວ່າ "ຂ້ອຍຈະເຮັດຢ່າງໃດ ກ່ຽວກັບເລື່ອງລູກຊາຍຂອງຂ້ອຍ?"
[3]ແລ້ວເຈົ້າຈະໄປຈາກທີ່ນັ້ນຈົນຮອດຕົ້ນໄມ້ສັກສິດທີ່ຕາໂບ ຢູ່ທີ່ນັ້ນ ເຈົ້າຈະພົບຊາຍສາມຄົນ
ຊຶ່ງກຳລັງໄປຖວາຍເຄື່ອງບູຊາແກ່ພຣະເຈົ້າທີ່ເມືອງເບັດເອນ ຜູ້ໜຶ່ງໃນພວກເຂົານັ້ນຈູງແບ້
ນ້ອຍສາມໂຕ ແລະອີກຜູ້ໜຶ່ງມີເຂົ້າຈີ່ສາມກ້ອນ ສ່ວນຜູ້ທີສາມມີຖົງນ້ຳອະງຸ່ນ. [4]ພວກເຂົາຈະ
ຄຳນັບເຈົ້າ ແລະເອົາເຂົ້າຈີ່ສອງກ້ອນໃຫ້ເຈົ້າ ແລ້ວເຈົ້າກໍຈະຮັບເອົາ. [5]ຕໍ່ຈາກນັ້ນ ເຈົ້າກໍຈະໄປ
ຮອດພູຂອງພຣະເຈົ້າທີ່ເມືອງກິເບອາ ໃນເມືອງນີ້ມີຄ້າຍພັກຂອງຊາວຟີລິດສະຕິນ ຢູ່ປາກ
ປະຕູເຂົ້າເມືອງ ເຈົ້າຈະພົບກຸ່ມຜູ້ປະກາດພຣະທຳກຳລັງດີດພິນ ຕີກອງ ແລະເປົ່າຂຸ່ຍລົງມາ
ຈາກແທ່ນບູຊາເທິງພູ ພວກເຂົາຈະຟ້ອນ ແລະໂຫ່ຮ້ອງດ້ວຍສຽງອັນດັງ. [6]ພຣະວິນຍານຂອງ
ພຣະເຈົ້າຈະເຂົ້າຢູ່ໃນຕົວຂອງເຈົ້າ ເຈົ້າຈະເຂົ້າຮ່ວມໃນການທຳນວາຍ ແລະປ່ຽນເປັນຄົນຜູ້ໃໝ່.
[7]ເມື່ອມີເລື່ອງຢ່າງນີ້ ຈົ່ງເຮັດຕາມທີ່ພຣະເຈົ້າຊົງນຳພາໃຫ້ເຮັດ. [8]ເຈົ້າຈະໄປເມືອງກິນການ
ກ່ອນຂ້ອຍ ແລະຂ້ອຍຈະໄປພົບເຈົ້າຢູ່ທີ່ນັ້ນ ເພື່ອຖວາຍເຄື່ອງເຜົາບູຊາ ແລະຖວາຍເຄື່ອງບູຊາ
ເພື່ອຄວາມສາມັກຄີ ຈົ່ງຄອຍຖ້າຢູ່ຫັ້ນເຈັດມື້ຈົນກວ່າຂ້ອຍຈະມາບອກເຈົ້າວ່າຈະເຮັດຢ່າງໃດ."
[9]ເມື່ອຊາອູນໜີຈາກຊາມູເອນໄປ ພຣະເຈົ້າກໍຊົງດັດແປງໃຫ້ລາວເປັນຄົນໃໝ່ ແລະທຸກສິ່ງ
ທີ່ຊາມູເອນໄດ້ບອກໄວ້ກັບລາວກໍໄດ້ບັງເກີດຂຶ້ນໃນມື້ນັ້ນ. [10]ເມື່ອຊາອູນ ແລະຄົນໃຊ້ມາຮອດ
ເມືອງກິເບອາ ກໍມີກຸ່ມຜູ້ປະກາດພຣະທຳມາພົບລາວ ພຣະວິນຍານຂອງພຣະເຈົ້າກໍຊົງເຂົ້າຢູ່
ກັບລາວ ແລະນຳລາວໄປຮ່ວມໃນການທຳນວາຍຂອງພວກເຂົາ. [11]ຜູ້ທີ່ເຄີຍເຫັນລາວມາກ່ອນ
ເມື່ອໄດ້ເຫັນລາວກຳລັງເຮັດຢ່າງນັ້ນຈຶ່ງຖາມກັນວ່າ, "ມີຫຍັງເກີດຂຶ້ນກັບພວກລູກຊາຍຂອງກີ-
ເຊ? ຊາອູນ ໄດ້ກາຍເປັນຜູ້ປະກາດພຣະທຳແລ້ວ?"
[12]ຊາຍຜູ້ໜຶ່ງທີ່ຢູ່ທີ່ນັ້ນກໍຖາມຂຶ້ນວ່າ, "ຄົນອື່ນເດເປັນຢ່າງໃດ ແລະພໍ່ຂອງພວກເຂົາແມ່ນ
ໃຜ?" ດັ່ງນັ້ນ ຄຳເວົ້າຈຶ່ງກ່າວກັນມາວ່າ, "ຊາອູນໄດ້ກາຍເປັນຜູ້ປະກາດພຣະທຳໄປແລ້ວບໍ?"
[13]ເມື່ອຊາອູນໄດ້ທຳນວາຍສິ້ນສຸດແລ້ວ ລາວກໍໄປທີ່ແທ່ນບູຊາຢູ່ເທິງພູນ້ອຍ.
[14]ລຸງຂອງລາວໄດ້ຖາມລາວກັບຄົນໃຊ້ວ່າ, "ພວກເຈົ້າໄປຢູ່ໃສ?" ຊາອູນຕອບວ່າ "ໄປຊອກ
ຫາລໍ ເມື່ອພວກຂ້ານ້ອຍບໍ່ພົບມັນ ພວກຂ້ານ້ອຍກໍໄດ້ພາກັນໄປຫາຊາມູເອນ." [15]ລຸງຂອງຊາ-
ອູນໄດ້ຖາມອີກວ່າ, "ເພິ່ນບອກຫຍັງແດ່ແກ່ພວກເຈົ້າ?" [16]ຊາອູນຕອບວ່າ, "ເພິ່ນບອກຂ້ານ້ອຍ
ວ່າ ສັດນັ້ນໄດ້ພົບແລ້ວ" ແຕ່ເລື່ອງທີ່ຊາມູເອນບອກວ່າລາວຈະໄດ້ເປັນເຈົ້າຊີວິດນັ້ນ ລາວບໍ່ໄດ້

ບອກລຸງຂອງລາວເລີຍ.

## ຊາອູນຖືກປະກາດເປັນເຈົ້າຊີວິດ

[17]ຊາມູເອນ ໄດ້ເອີ້ນປະຊາຊົນໄປເຝົ້າພຣະຜູ້ເປັນເຈົ້າທີ່ເມືອງມິດຊະປາ ແລະເວົ້າຕໍ່ພວກ
ເຂົາວ່າ, [18]“ພຣະຜູ້ເປັນເຈົ້າຂອງພວກອິສຣາເອນຊົງກ່າວວ່າ ເຮົາໄດ້ພາພວກເຈົ້າອອກຈາກ
ປະເທດເອຢິບ ແລະຊ່ອຍພວກເຈົ້າໃຫ້ພົ້ນຈາກຊາວເອຢິບ ແລະຊົນຊາດອື່ນໆ ທີ່ຂົ່ມເຫັງ
ພວກເຈົ້າ ເຮົາເປັນພຣະເຈົ້າຊຶ່ງເປັນຜູ້ທີ່ຊ່ອຍພວກເຈົ້າໃຫ້ພົ້ນຈາກຄວາມທຸກຍາກລຳບາກ
ແລະຄວາມຫຍຸ້ງຍາກທຸກຢ່າງ [19]ແຕ່ວ່າ ມື້ນີ້ພວກເຈົ້າໄດ້ປະຖິ້ມເຮົາ ແລະຮ້ອງຂໍໃຫ້ເຮົາແຕ່ງ-
ຕັ້ງເຈົ້າຊີວິດໃຫ້ແກ່ພວກເຈົ້າ ບັດນີ້ໃຫ້ພວກເຈົ້າທ້ອນໂຮມກັນເປັນຕະກູນ ແລະເປັນພວກເຜົ່າ
ຕໍ່ໜ້າເຮົາ.”

[20]ແລ້ວຊາມູເອນກໍນຳເອົາຕົວແທນແຕ່ລະຕະກູນເຂົ້າມາຈົກສະຫລາກ ພຣະຜູ້ເປັນເຈົ້າຈຶ່ງ
ຊົງເລືອກເອົາຕະກູນເບັນຢາມິນ. [21]ຕໍ່ມາ ຊາມູເອນໄດ້ເອົາຄອບຄົວໃນຕະກູນເບັນຢາມິນເຂົ້າ
ມາ ຈຶ່ງໄດ້ເລືອກຖືກຄອບຄົວຂອງມາຕຣີ ຕໍ່ໄປກໍນຳເອົາຊາອູນລູກຊາຍຂອງກີເຊໃນຄອບຄົວ
ມາຕຣີເຂົ້າມາ ແຕ່ໃນເວລານັ້ນພວກເຂົາບໍ່ໄດ້ພົບລາວ. [22]ພວກເຂົາຈຶ່ງທູນຖາມພຣະຜູ້ເປັນເຈົ້າ
ວ່າ, “ເພິ່ນມານີ້ແລ້ວບໍ?” ພຣະຜູ້ເປັນເຈົ້າຊົງຕອບວ່າ, “ມາແລ້ວ ລາວກຳລັງລີ້ຢູ່ທາງຫລັງ
ເຄື່ອງຂອງ.”

[23]ດັ່ງນັ້ນ ພວກເຂົາຈຶ່ງແລ່ນໄປນຳເອົາ ຊາອູນ ມາຫາປະຊາຊົນ ໃນເວລາທີ່ລາວຢູ່ທ່າມ-
ກາງພວກເຂົານັ້ນ ລາວສູງກວ່າຄົນອື່ນໆ. [24]ຊາມູເອນກໍເວົ້າຕໍ່ປະຊາຊົນວ່າ, “ນີ້ຄືຊາຍທີ່ພຣະ-
ຜູ້ເປັນເຈົ້າຊົງເລືອກໄວ້ ໃນທ່າມກາງເຮົາ ບໍ່ມີຜູ້ໃດຄືກັບລາວ.” ປະຊາຊົນທຸກຄົນກໍຮ້ອງສຽງ
ດັງຂຶ້ນວ່າ, “ຂໍພະລາຊາຈົ່ງຊົງພະຈະເລີນ.”

[25]ຕໍ່ມາ ຊາມູເອນກໍໄດ້ອະທິບາຍເຖິງຄວາມຈິງ ແລະໜ້າທີ່ຂອງເຈົ້າຊີວິດໃຫ້ປະຊາຊົນຟັງ
ແລະຂຽນໄວ້ໃນໜັງສືທີ່ກອງໄວ້ໃນບ່ອນສັກສິດ ແລ້ວເພິ່ນກໍໃຫ້ທຸກຄົນກັບເມືອເຮືອນ. [26]ສ່ວນ
ຊາອູນກໍກັບເມືອເຮືອນທີ່ເມືອງກິເບອາເຊັ່ນກັນ ມີບາງຄົນທີ່ເປັນນັກຮົບຊຶ່ງໄດ້ຮັບການບັນດົນ
ໃຈຈາກພຣະເຈົ້າກໍໄປນຳຊາອູນ. [27]ແຕ່ກໍມີຄົນທີ່ເປັນນັກເລງໄດ້ເວົ້າວ່າ, “ຄົນນີ້ຈະຊ່ອຍພວກ
ເຮົາໄດ້ແນວໃດ?” ພວກເຂົາໄດ້ໝິ່ນປະໝາດຊາອູນ ແລະບໍ່ຍອມຖວາຍຂອງຂວັນແກ່ລາວ
ເລີຍ.

# ບົດທີ 11

## ຊາອູນຜາບແພ້ຊາວອຳໂມນ

[1]ເດືອນຕໍ່ມາ ນາຮາດຊາວອຳໂມນໄດ້ໄປໂຈມຕີເມືອງຢາເບັດ ຢູ່ໃນເຂດແດນກີເລອາດ
ທະຫານຂອງເພິ່ນໄດ້ອ້ອມເມືອງໄວ້ ຊາວເມືອງຢາເບັດຈຶ່ງເວົ້າຕໍ່ນາຮາດວ່າ, “ຂໍພະອົງຊົງ
ສັນຍາກັບພວກຂ້ານ້ອຍເສຍກ່ອນວ່າ ຈະບໍ່ຍຶດເອົາເມືອງນີ້ ແລ້ວພວກຂ້ານ້ອຍຈຶ່ງຈະຍອມຮັບ
ໃຊ້ພະອົງ.”

[2]ແຕ່ນາຮາດໄດ້ຕອບວ່າ, “ເຮົາຂໍສັນຍາແບບນີ້ກັບພວກເຈົ້າ ຄື ເຮົາຈະເຈາະໜ່ວຍຕາເບື້ອງ

ຂວາທຸກຄົນອອກ ເພື່ອໃຫ້ພວກອິສຣາເອນທຸກຄົນເສຍກຽດ.
3ພວກຜູ້ນຳຂອງຢາເບັດກໍເວົ້າວ່າ, “ຂໍອະນຸຍາດໃຫ້ພວກຂ້ານ້ອຍສົ່ງຄົນນຳຂ່າວອອກໄປທົ່ວ
ເຂດແດນອິສຣາເອນ ພາຍໃນເຈັດມື້ເສຍກ່ອນ ຖ້າວ່າ ບໍ່ມີຜູ້ໃດຊ່ອຍເຫລືອພວກຂ້ານ້ອຍແລ້ວ
ພວກຂ້ານ້ອຍຈຶ່ງຈະຍອມຈຳນົນຕໍ່ພວກທ່ານ.”
4ຝ່າຍຄົນນຳຂ່າວກໍໄດ້ມາຮອດເມືອງກິເບອາ ບ່ອນທີ່ຊາອູນຢູ່ ເມື່ອພວກເຂົາບອກຂ່າວນັ້ນ
ປະຊາຊົນກໍຮ້ອງໄຫ້ດ້ວຍຄວາມຂົມຂື່ນ. 5ສ່ວນຊາອູນກໍກຳລັງຈູງງົວມາແຕ່ນາ ເພິ່ນຈຶ່ງຖາມ
ວ່າ, “ມີຫຍັງເກີດຂຶ້ນ? ເປັນຫຍັງທຸກໆ ຄົນຈຶ່ງພາກັນຮ້ອງໄຫ້?” ພວກເຂົາກໍໄດ້ບອກເລື່ອງທີ່
ຜູ້ນຳຂ່າວຈາກຢາເບັດໄດ້ລາຍງານມານັ້ນສູ່ເພິ່ນຟັງ.
6ເມື່ອຊາອູນໄດ້ຍິນດັ່ງນັ້ນ ພຣະວິນຍານຂອງພຣະເຈົ້າກໍໄດ້ເຂົ້າຢູ່ໃນຕົວເພິ່ນ ແລ້ວເພິ່ນກໍ
ເກີດໃຈຮ້າຍຂຶ້ນ. 7ເພິ່ນໄດ້ເອົາງົວມາຂ້າສອງໂຕ ແລະປາດເປັນຕ່ອນ ແລ້ວເອົາໃຫ້ພວກນຳ
ຂ່າວມານັ້ນຖືໄປທົ່ວທັງເຂດແດນອິສຣາເອນ ພ້ອມທັງບອກວ່າ, “ຖ້າຜູ້ໃດບໍ່ຕິດຕາມຊາອູນ
ແລະຊາມູເອນເຂົ້າສູ່ສະໜາມຮົບ ງົວຂອງຜູ້ນັ້ນຈະຕ້ອງຖືກຂ້າແບບນີ້.” ຊາວອິສຣາເອນຢ້ານ
ກົວຕໍ່ສິ່ງທີ່ພຣະຜູ້ເປັນເຈົ້າຈະຊົງເຮັດ ພວກເຂົາທັງໝົດຈຶ່ງມາດ້ວຍຄວາມນຶກຄິດແບບດຽວກັນ.
8ຊາອູນກໍພາພວກເຂົາໂຮມກັນຢູ່ທີ່ເບເຊັກ ຊຶ່ງມີພວກອິສຣາເອນສາມແສນຄົນ ແລະພວກຢູ-
ດາອີກສາມສິບພັນຄົນ.
9ພວກເຂົາບອກຕໍ່ຜູ້ນຳຂ່າວມາຈາກຢາເບັດວ່າ, “ຈົ່ງບອກປະຊາຊົນຂອງພວກເຈົ້າວ່າ ມື້ອື່ນ
ຕອນບ່າຍ ພວກຂ້ອຍຈະໄປຊ່ອຍພວກເຂົາໃຫ້ພົ້ນໄພ” ເມື່ອຊາວຢາເບັດໄດ້ຮັບຂ່າວ ພວກເຂົາ
ຈຶ່ງພາກັນຊົມຊື່ນຍິນດີ ແລະເວົ້າຕໍ່ນາຮາດວ່າ, 10“ມື້ອື່ນພວກຂ້ານ້ອຍຈະຍອມຈຳນົນຕໍ່ທ່ານ
ແລະທ່ານຈົ່ງເຮັດກັບພວກຂ້ານ້ອຍໄດ້ຕາມຄວາມຕ້ອງການ.”
11ເຊົ້າມື້ໃໝ່ມາແຕ່ເດິກໆ ຊາອູນກໍແບ່ງທະຫານຂອງຕົນອອກເປັນສາມໝວດ ແລ້ວພວກ
ເຂົາໄດ້ມຸ້ງໜ້າໄປໂຈມຕີຊາວອຳໂມນທີ່ຄ້າຍພັກ ພວກເຂົາສູ້ຮົບກັນຈົນຮອດຕອນບ່າຍ ແລ້ວ
ທະຫານຂອງຊາອູນໄດ້ຂ້າສັດຕູຕາຍຢ່າງຫລວງຫລາຍ ຝ່າຍພວກທີ່ຍັງເຫລືອກໍແຕກກະຈັດ-
ກະຈາຍໄປ ແລະແລ່ນປົບໜີເອົາຕົວລອດ.
12ແລ້ວຊາວອິສຣາເອນຈຶ່ງເວົ້າຕໍ່ຊາມູເອນວ່າ, “ໃຜເວົ້າວ່າຊາອູນບໍ່ແມ່ນເຈົ້າຊີວິດຂອງ
ພວກເຮົານັ້ນ? ຈົ່ງຈັບຕົວອອກມາຫາພວກເຮົາ ແລ້ວພວກເຮົາຈະຂ້າພວກມັນຖິ້ມ.” 13ແຕ່ຊາ-
ອູນເວົ້າວ່າ, “ມື້ນີ້ ຈະບໍ່ມີຜູ້ໃດຖືກປະຫານຊີວິດ ເພາະວ່າ ແມ່ນມື້ທີ່ພຣະຜູ້ເປັນເຈົ້າ ໄດ້ຊ່ອຍ
ຊາວອິສຣາເອນໃຫ້ພົ້ນໄພ.” 14ແລ້ວຊາມູເອນກໍເວົ້າກັບປະຊາຊົນວ່າ, “ໃຫ້ພວກເຮົາທຸກຄົນໄປ
ເມືອງກິນການ ແລະປະກາດແຕ່ງຕັ້ງຊາອູນໃຫ້ເປັນເຈົ້າຊີວິດຂອງພວກເຮົາຢູ່ທີ່ນັ້ນອີກ.
15ດັ່ງນັ້ນ ພວກເຂົາທັງໝົດຈຶ່ງໄປເມືອງກິນການ ແລະປະກາດແຕ່ງຕັ້ງໃຫ້ ຊາອູນເປັນເຈົ້າຊີ-
ວິດຕໍ່ພຣະພັກພຣະຜູ້ເປັນເຈົ້າ ແລະໄດ້ຖວາຍເຄື່ອງບູຊາ ເພື່ອຄວາມສາມັກຄີ ຊາອູນພ້ອມທັງ
ປະຊາຊົນທຸກຄົນກໍພາກັນສະເຫລີມສະຫລອງກັນຢ່າງມ່ວນຊື່ນ.”

# ບົດທີ 12

## ຄຳປາໄສຂອງຊາມູເອນ

[1]ຊາມູເອນ ເວົ້າຕໍ່ຊາວ ອິສຣາເອນ ວ່າ, “ຂ້າພະເຈົ້າໄດ້ເຮັດໃນສິ່ງທີ່ພວກທ່ານຮ້ອງຂໍ ຂ້າພະ-
ເຈົ້າໄດ້ແຕ່ງຕັ້ງເຈົ້າຊີວິດປົກຄອງພວກທ່ານແລ້ວ. [2]ດຽວນີ້ ພວກທ່ານກໍມີຊາອູນ ເປັນຜູ້ນຳ ສຳ-
ລັບຂ້າພະເຈົ້າເອງກໍເປັນຄົນເຖົ້າແກ່ ແລະຜົມຫງອກແລ້ວ ລູກຊາຍທັງໝົດຂອງຂ້າພະເຈົ້າກໍຢູ່
ກັບພວກທ່ານ ຂ້າພະເຈົ້າເປັນຜູ້ນຳພວກທ່ານມາຕັ້ງແຕ່ໜຸ່ມນ້ອຍຈົນຮອດດຽວນີ້. [3]ເວລານີ້ຂ້າ-
ພະເຈົ້າກໍຢູ່ທີ່ນີ້ແລ້ວ ຖ້າວ່າຂ້າພະເຈົ້າໄດ້ຮອດຜິດສິ່ງໃດ ພວກທ່ານຈົ່ງຟ້ອງຮ້ອງຂ້າພະເຈົ້າຕໍ່
ພຣະຜູ້ເປັນເຈົ້າ ແລະຕໍ່ເຈົ້າຊີວິດທີ່ພຣະອົງຊົງເລືອກໄວ້ນັ້ນ ຂ້າພະເຈົ້າໄດ້ເອົາງົວ ແລະລໍຂອງ
ທ່ານບໍ? ຂ້າພະເຈົ້າໄດ້ສໍ້ໂກງກົດຂີ່ຂົ່ມເຫັງໃຜແດ່? ຂ້າພະເຈົ້າໄດ້ຮັບສິນຈ້າງລາງວັນຈາກຜູ້ໃດ
ບໍ? ຖ້າວ່າ ຂ້າພະເຈົ້າໄດ້ເຮັດສິ່ງໜຶ່ງສິ່ງໃດໃນສິ່ງທີ່ກ່າວມານີ້ ຂ້າພະເຈົ້າຍິນດີສົ່ງຄືນທຸກຢ່າງ
ໃນສິ່ງທີ່ຂ້າພະເຈົ້າໄດ້ເຮັດມານັ້ນ.”

[4]ປະຊາຊົນໄດ້ຕອບວ່າ, “ທ່ານບໍ່ໄດ້ສໍ້ໂກງ ຫລືຂົ່ມເຫັງຂ້ານ້ອຍແຕ່ຢ່າງໃດດອກ ແລະທ່ານ
ກໍບໍ່ໄດ້ຮັບເອົາສິ່ງໜຶ່ງສິ່ງໃດຈາກໃຜໝົດ.” [5]ຊາມູເອນ ເວົ້າຕໍ່ໄປວ່າ, “ມື້ນີ້ ພຣະຜູ້ເປັນເຈົ້າພ້ອມ
ກັບເຈົ້າຊີວິດທີ່ພຣະອົງຊົງເລືອກເອົານັ້ນກໍເປັນພະຍານຫລັກຖານຕໍ່ໜ້າພວກທ່ານວ່າ ພວກທ່ານ
ບໍ່ໄດ້ພົບຄວາມຜິດປະການໃດໝົດໃນຕົວຂ້າພະເຈົ້າ.” ພວກເຂົາໄດ້ພາກັນຕອບວ່າ, “ພຣະຜູ້-
ເປັນເຈົ້າຊົງເປັນພະຍານຂອງພວກຂ້ານ້ອຍ.”

[6]ຊາມູເອນ ເວົ້າຕໍ່ໄປອີກວ່າ, “ພຣະຜູ້ເປັນເຈົ້າຊົງເປັນຜູ້ທີ່ໄດ້ເລືອກເອົາໂມເຊ ແລະອາໂຣນ
ແລະຊົງພາພວກປູ່ຍ່າຕາຍາຍຂອງພວກທ່ານອອກມາຈາກປະເທດ ເອຢິບ. [7]ແລະບັດນີ້ ຈົ່ງຢືນ
ຢູ່ໃນບ່ອນທີ່ພວກທ່ານຢືນຢູ່ນັ້ນ ຂ້າພະເຈົ້າຈະຟ້ອງຮ້ອງພວກທ່ານຕໍ່ພຣະຜູ້ເປັນເຈົ້າ ເພື່ອ
ເຕືອນ ພວກ ທ່ານ ເຖິງ ການ ຍິ່ງ ໃຫຍ່ ທີ່ ພຣະຜູ້ເປັນເຈົ້າ ໄດ້ ຊົງ ເຮັດ ເພື່ອ ຊ່ອຍ ເຫລືອ ພວກ ທ່ານ
ແລະປູ່ຍ່າຕາຍາຍຂອງພວກທ່ານໃຫ້ພົ້ນໄພ. [8]ເມື່ອຢາໂຄບ ແລະຄອບຄົວຂອງລາວໄປປະເທດ
ເອຢິບ ພວກ ເອຢິບກໍໄດ້ຂົ່ມເຫັງພວກເຂົາ ຝ່າຍປູ່ຍ່າຕາຍາຍຂອງພວກທ່ານໄດ້ຮ້ອງຂໍຄວາມ
ຊ່ອຍເຫລືອຈາກພຣະຜູ້ເປັນເຈົ້າ ພຣະອົງກໍຊົງໃຊ້ໂມເຊ ແລະອາໂຣນ ນຳພວກເຂົາອອກໜີ
ຈາກປະເທດ ເອຢິບ ແລະໃຫ້ພວກເຂົາມາຕັ້ງຮາກຖານຢູ່ໃນປະເທດນີ້.

[9]ແຕ່ວ່າ ພວກເຂົາໄດ້ລືມພຣະຜູ້ເປັນເຈົ້າ ພຣະອົງຈຶ່ງຊົງໃຫ້ສິເສຣາ ແມ່ທັບເມືອງຮາໂຊ
ມາສູ້ຮົບກັບພວກເຂົາ ແລະໄດ້ໄຊຊະນະ ຕໍ່ມາພວກ ຟີລິດສະຕິນ ກໍໄດ້ມາສູ້ຮົບກັບພວກເຂົາ
ແລະຕໍ່ມາອີກເຈົ້າຊີວິດຂອງພວກ ໂມອາບ ກໍມາສູ້ຮົບ ແລະຊະນະພວກເຂົາ. [10]ພວກເຂົາໄດ້ຮ້ອງ
ຂໍຄວາມຊ່ອຍເຫລືອຕໍ່ພຣະຜູ້ເປັນເຈົ້າວ່າ “ພວກຂ້ານ້ອຍໄດ້ເຮັດບາບ ເພາະວ່າ ພວກຂ້ານ້ອຍ
ໄດ້ຫັນໜີຈາກພຣະອົງຊຶ່ງເປັນ ພຣະຜູ້ເປັນເຈົ້າ ພວກຂ້ານ້ອຍໄດ້ນະມັດສະການ ພະບາອານ
ແລະ ພະອັດຊະໂຕເຣດ ຂໍພຣະອົງຊົງຊ່ອຍຊີວິດພວກຂ້ານ້ອຍໃຫ້ພົ້ນຈາກສັດຕູ ແລະພວກຂ້າ-
ນ້ອຍຈະກັບມານະມັດສະການພຣະອົງ.” [11]ແລ້ວ ພຣະຜູ້ເປັນເຈົ້າ ກໍຊົງສົ່ງ ເຢຣຸບ-ບາອານ
ບາຣາກ ເຢັບທາ ແລະຊາມູເອນ ໃຫ້ເປັນຜູ້ຊ່ອຍຊີວິດຂອງພວກທ່ານໃຫ້ພົ້ນຈາກສັດຕູ ພວກ
ທ່ານຈຶ່ງໄດ້ຢູ່ຢ່າງປອດໄພ.

12ແຕ່ພວກທ່ານເຫັນວ່າເຈົ້າຊີວິດ ນາຮາດ ຂອງຊາວ ອຳໂມນ ໄດ້ມາຕໍ່ສູ້ພວກທ່ານ ພວກ
ທ່ານກໍປະຖິ້ມ ພຣະຜູ້ເປັນເຈົ້າ ທີ່ເປັນ ເຈົ້າຊີວິດຂອງພວກທ່ານ ແລະ ເວົ້າກັບຂ້າພະເຈົ້າວ່າ,
"ພວກຂ້ານ້ອຍຢາກໄດ້ເຈົ້າຊີວິດມາປົກຄອງພວກຂ້ານ້ອຍ." 13ນີ້ເດ! ເຈົ້າຊີວິດທີ່ພວກທ່ານຢາກ
ໄດ້ໂດຍຮ້ອງຂໍນຳ ພຣະຜູ້ເປັນເຈົ້າ ແລະພຣະອົງກໍຊົງປະທານໃຫ້ແກ່ພວກທ່ານແລ້ວ. 14ຖ້າ
ພວກທ່ານຢ້ານຢຳ ພຣະຜູ້ເປັນເຈົ້າ ຂອງພວກທ່ານ ຈົ່ງຮັບໃຊ້ພຣະອົງ ເຊື່ອຟັງຄຳສັ່ງຂອງ
ພຣະອົງ ຖ້າພວກທ່ານ ແລະເຈົ້າຊີວິດຂອງພວກທ່ານຕິດຕາມພຣະອົງໄປ ພວກທ່ານກໍຈະຈະ-
ເລີນຮຸ່ງເຮືອງ. 15ຖ້າວ່າພວກທ່ານບໍ່ຟັງ ພຣະຜູ້ເປັນເຈົ້າ ແລະບໍ່ເຊື່ອພຣະຄຳສັ່ງຂອງພຣະອົງ
ພຣະອົງຈະຕໍ່ສູ້ພວກທ່ານ ແລະເຈົ້າຊີວິດຂອງພວກທ່ານດ້ວຍ.

16ດັ່ງນັ້ນ ຈົ່ງພາກັນຢືນຢູ່ໃນບ່ອນທີ່ພວກທ່ານຢູ່ນັ້ນ ແລະພວກທ່ານຈະເຫັນການຍິ່ງໃຫຍ່ທີ່
ພຣະຜູ້ເປັນເຈົ້າ ຈະຊົງກະທຳ. 17ດຽວນີ້ເປັນລະດູແລ້ງ ຂ້າພະເຈົ້າຈະອ້ອນວອນຂໍໃຫ້ພຣະຜູ້-
ເປັນເຈົ້າ ສົ່ງສຽງຟ້າຮ້ອງ ແລະຝົນຕົກລົງມາ ເມື່ອພວກທ່ານເຫັນຢ່າງນັ້ນ ທ່ານຈະຮູ້ໄດ້ວ່າ
ເວລາທີ່ພວກທ່ານໄດ້ຮ້ອງຂໍເອົາເຈົ້າຊີວິດຈາກພຣະອົງ ພວກທ່ານໄດ້ເຮັດຄວາມຜິດອັນຍິ່ງໃຫຍ່
ຕໍ່ພຣະຜູ້ເປັນເຈົ້າ."

18ແລ້ວ ຊາມູເອນ ໄດ້ອ້ອນວອນ ໃນມື້ດຽວກັນນັ້ນ ພຣະຜູ້ເປັນເຈົ້າ ກໍຊົງສົ່ງສຽງຟ້າຮ້ອງ
ແລະຝົນຕົກລົງມາ ປະຊາຊົນທຸກຄົນຈຶ່ງຢ້ານກົວຊາມູເອນ ແລະພຣະຜູ້ເປັນເຈົ້າ. 19ພວກເຂົາ
ໄດ້ເວົ້າຕໍ່ຊາມູເອນວ່າ, "ທ່ານເອີຍ ຂໍໄດ້ໂຜດກະລຸນາອ້ອນວອນພຣະຜູ້ເປັນເຈົ້າຂອງທ່ານສຳ-
ລັບພວກຂ້ານ້ອຍແດ່ ເພື່ອວ່າພວກຂ້ານ້ອຍຈະບໍ່ຕາຍ ນອກຈາກຄວາມຜິດຢ່າງອື່ນຂອງພວກ
ຂ້ານ້ອຍແລ້ວ ພວກຂ້ານ້ອຍກໍໄດ້ເຮັດຜິດໂດຍການຮ້ອງຂໍເອົາເຈົ້າຊີວິດ."

20ຊາມູເອນຕອບວ່າ, "ຢ່າຢ້ານກົວເລີຍ ພວກທ່ານໄດ້ເຮັດການຊົ່ວມາແລ້ວກໍຈິງຢູ່ ແຕ່ຈົ່ງ
ຢ່າຫັນໜີຈາກ ພຣະຜູ້ເປັນເຈົ້າ ອີກ ຈົ່ງຮັບໃຊ້ພຣະອົງໃຫ້ສຸດຈິດສຸດໃຈຂອງທ່ານ. 21ຢ່າເຄົາລົບ
ນັບຖືພະປອມ ເພາະວ່າພວກມັນຊ່ວຍເຫລືອໃຫ້ພວກທ່ານພົ້ນໄພບໍ່ໄດ້ ພຣະອົງຈະບໍ່ຊົງປະ-
ປ່ອຍພວກທ່ານໄປ 22ດ້ວຍພຣະນາມອັນຍິ່ງໃຫຍ່ຂອງພຣະອົງ ພຣະອົງຈະຊົງຕັດສິນພຣະໄທ
ເອົາພວກທ່ານເປັນໄພ່ພົນຂອງພຣະອົງ. 23ສ່ວນຂ້າພະເຈົ້າຈະບໍ່ເຊົາອ້ອນວອນສຳລັບພວກທ່ານ
ເພາະ ການ ເຊົາ ອ້ອນວອນ ເປັນ ການ ຜິດ ຕໍ່ ພຣະຜູ້ເປັນເຈົ້າ ແຕ່ ຂ້າພະເຈົ້າ ຈະ ສັ່ງສອນ ໃຫ້ ພວກ
ທ່ານເຮັດໃນສິ່ງທີ່ດີ ແລະສິ່ງທີ່ຖືກຕ້ອງ. 24ຈົ່ງຢ້ານຢຳ ພຣະຜູ້ເປັນເຈົ້າ ແລະຮັບໃຊ້ພຣະອົງ
ດ້ວຍຄວາມສັດຊື່ ແລະສຸດຈິດສຸດໃຈ ຈົ່ງລະນຶກເຖິງການງານອັນຍິ່ງໃຫຍ່ທີ່ພຣະອົງຊົງເຮັດ
ສຳລັບພວກທ່ານ 25ແຕ່ຖ້າພວກທ່ານຍັງເຮັດຜິດຢູ່ອີກ ພວກທ່ານ ແລະເຈົ້າຊີວິດຂອງພວກ
ພວກທ່ານຈະຖືກທຳລາຍ."

# ບົດທີ 13

## ເສິກສົງຄາມຕໍ່ສູ້ພວກຟີລິດສະຕິນ

1ຊາອູນ ອາຍຸເພິ່ນໄດ້ ສາມສິບປີ ເມື່ອເພິ່ນໄດ້ເປັນກະສັດ ແລະປົກຄອງອິສຣາເອນຢູ່ສີ່ສິບ
ປີ. 2ຊາອູນ ໄດ້ເລືອກເອົາຊາວ ອິສຣາເອນ ສາມພັນຄົນໄປຢູ່ກັບຕົນ ແລະສົ່ງພວກອື່ນກັບຄືນ

ເມືອບ້ານ ເພິ່ນແບ່ງເອົາສອງພັນຄົນໄປບ້ານ ມິກມາດ ແລະໄປເທິງພູນ້ອຍທີ່ເມືອງ ເບັດເອນ
ກັບເພິ່ນ ສ່ວນພັນຄົນກໍໃຫ້ໄປກັບ ໂຢນາທານ ລູກຊາຍຂອງຕົນທີ່ເມືອງ ກິເບອາ ໃນເຂດແດນ
ຂອງຕະກູນ ເບັນຢາມິນ.
3ໂຢນາທານ ໄດ້ຂ້າຜູ້ບັນຊາການ ຟີລິດສະຕິນ ໃນເມືອງ ເກບາ ແລະຊາວ ຟີລິດສະຕິນກໍໄດ້
ຍິນຂ່າວນີ້ ແລະເວົ້າວ່າ ຊາວ ເຮັບເຣີໄດ້ຕຽມເຮັດເສິກ ສ່ວນຊາອູນກໍສັ່ງພວກຜູ້ນຳຂ່າວເປົ່າ
ແກຜ່ານໄປທົ່ວທັງປະເທດ. 4ເມື່ອຊາວ ອິສຣາເອນ ໄດ້ຍິນຂ່າວວ່າຊາອູນໄດ້ຂ້ານາຍທະຫານ
ຟີລິດສະຕິນ ແລະຮູ້ວ່າຊາວ ຟີລິດສະຕິນກໍກຽດຊັງພວກຕົນ ພວກເຂົາຈຶ່ງຕອບຄຳຮຽກຮ້ອງ
ແລະເຂົ້າໄປສົມທົບກັບຊາອູນທີ່ເມືອງ ກິນການ.
5ຊາວ ຟີລິດສະຕິນ ໄດ້ທ້ອນໂຮມກຳລັງສູ້ຮົບກັບຊາວ ອິສຣາເອນ ພວກເຂົາມີລົດຮົບສາມ
ສິບພັນຄັນ ທະຫານມ້າຫ້າພັນຄົນ ແລະມີທະຫານຫລວງຫລາຍເໝືອນດັ່ງເມັດດິນຊາຍຢູ່ຝັ່ງ
ທະເລ ພວກເຂົາພາກັນໄປບ້ານ ມິກມາດທາງທິດຕາເວັນອອກຂອງ ເບັດ-ອາເວນ ແລະຕັ້ງ
ຄ້າຍພັກຢູ່ທີ່ນັ້ນ. 6ຝ່າຍຊາວ ອິສຣາເອນກໍຖືກບຸກລຸກໂຈມຕີຢ່າງດຸເດືອດ ແລະຢູ່ໃນທ່າຈົນຕາ-
ແຈ ພວກເຂົາຈຶ່ງໄປລີ້ຢູ່ໃນຖໍ້າໃນໂກນ ໃນລະຫວ່າງໂງ່ນຫີນ ໃນຂຸມ ແລະໃນສ້າງ. 7ຄົນອື່ນໆ
ອີກກໍຂ້າມແມ່ນໍ້າຢໍແດນໄປໃນເຂດແດນເມືອງ ຄາດ ແລະເມືອງ ກິເລອາດ. ສ່ວນຊາອູນກໍຍັງຢູ່
ໃນເມືອງ ກິນການ ແລະປະຊາຊົນທີ່ຢູ່ນຳເພິ່ນກໍຕົກສະທ້ານຢ້ານກົວ. 8ຊາອູນໄດ້ຄອຍຖ້າຢູ່
ເຈັດມື້ຕາມຄຳແນະນຳຂອງຊາມູເອນ ແຕ່ວ່າ ຊາມູເອນບໍ່ໄດ້ມາເມືອງ ກິນການ ພວກປະຊາຊົນ
ຈຶ່ງຄ່ອຍໜີຈາກຊາອູນ.
9ຊາອູນຈຶ່ງເວົ້າຕໍ່ພວກເຂົາວ່າ, “ຈົ່ງນຳເອົາເຄື່ອງເຜົາຖວາຍບູຊາ ແລະເຄື່ອງຖວາຍບູຊາ
ເພື່ອຄວາມສາມັກຄີທຳໃຫ້ເຮົາ” ແລ້ວພະອົງກໍຖວາຍເຄື່ອງບູຊານັ້ນ. 10ເມື່ອພິທີສຳເລັດແລ້ວ
ຊາມູເອນກໍມາຮອດ ຊາອູນຈຶ່ງອອກໄປຕ້ອນຮັບເພິ່ນ.
11ຊາມູເອນໄດ້ເວົ້າຂຶ້ນວ່າ, “ພຣະອົງກຳລັງເຮັດຫຍັງ?”ຊາອູນຕອບວ່າ, “ເຮົາເຫັນວ່າ ປະ-
ຊາຊົນກຳລັງຈະຈາກເຮົາໄປ ທ່ານເອງກໍບໍ່ມາຕາມທີ່ໄດ້ເວົ້າໄວ້ ແລະພວກ ຟີລິດສະຕິນກໍກຳລັງ
ທ້ອນໂຮມກັນທີ່ບ້ານ ມິກມາດ. 12ເຮົາຈຶ່ງຄິດວ່າ ຊາວ ຟີລິດສະຕິນ ຈະມາໂຈມຕີເຮົາໃນເມືອງ
ກິນການນີ້ ເຮົາຈຶ່ງຈຳເປັນຕ້ອງຖວາຍບູຊາເພື່ອຂໍຄວາມກະລຸນາຈາກ ພຣະເຈົ້າ.”
13ຊາມູເອນ ຕອບຂຶ້ນວ່າ, “ເປັນການໂງ່ງ່າວທີ່ສຸດທີ່ເຮັດຢ່າງນີ້ ພະອົງບໍ່ໄດ້ເຊື່ອຟັງຄຳສັ່ງ
ຂອງ ພຣະຜູ້ເປັນເຈົ້າ ຖ້າວ່າ ພະອົງຫາກເຊື່ອຟັງພຣະອົງ ພຣະຜູ້ເປັນເຈົ້າຈະໃຫ້ພະອົງ ແລະ
ເຊື້ອສາຍຂອງພະອົງປົກຄອງລາຊະອານາຈັກ ອິສຣາເອນ ຕະຫລອດໄປ. 14ແຕ່ວ່າ ດຽວນີ້ຍ້ອນ
ພະອົງບໍ່ເຊື່ອຟັງ ພຣະຜູ້ເປັນເຈົ້າ ພະອົງຈຶ່ງຈະບໍ່ຍືນຍາວຕໍ່ໄປ ພຣະຜູ້ເປັນເຈົ້າຈະສົ່ງຊາຍຜູ້
ໜຶ່ງທີ່ພຣະອົງຊົງພໍພຣະໄທ ແລະຈະຊົງແຕ່ງຕັ້ງໃຫ້ລາວປົກຄອງໄພ່ພົນຂອງພຣະອົງ.”
15ສ່ວນ ຊາມູເອນໄດ້ຈາກເມືອງ ກິນການໄປ ປະຊາຊົນທີ່ຍັງເຫລືອກໍຕິດຕາມຊາອູນໄປພົບ
ທະຫານຂອງເພິ່ນ ພວກເຂົາໄປຈາກເມືອງ ກິນການ ຈົນຮອດເມືອງ ກິເບອາ ເຂດແດນ ເບັນຢາ-
ມິນ ຊາອູນໄດ້ກວດກາເບິ່ງທະຫານຂອງພະອົງຊຶ່ງມີປະມານຫົກຮ້ອຍຄົນ. 16ແລ້ວຊາອູນກັບ
ໂຢນາທານ ລູກຊາຍຂອງເພິ່ນ ແລະພວກທະຫານກໍພັກຢູ່ທີ່ເມືອງ ເກບາ ໃນເຂດແດນ ເບັນຢາ-

ມິນ ສ່ວນພວກຟີລິດສະຕິນກໍຕັ້ງຄ້າຍພັກຢູ່ທີ່ມິກມາດ. 17ຝ່າຍທະຫານຟີລິດສະຕິນໄດ້ມຸ່ງໜ້າ
ອອກຈາກຄ້າຍພັກຂອງພວກເຂົາ ຈັດເປັນສາມໝວດ ເພື່ອໄປຫລອນໂຈມຕີຄື. 18ໝວດທີໜຶ່ງ
ໄປທາງໂອຟຣາໃນເຂດແດນຊູອານ ໝວດທີສອງກໍໄປທາງເມືອງເບັດ-ໂຮໂຣນ ແລະໝວດທີ
ສາມໄປທາງເຂດແດນກົງກັນຂ້າມກັບຮ່ອມພູເຊໂບອີມ ແລະໄປຕາມຖິ່ນແຫ້ງແລ້ງກັນດານ.

19ໃນເວລານັ້ນ ປະເທດອິສຣາເອນບໍ່ມີຊ່າງຕີເຫລັກ ເພາະວ່າຊາວຟີລິດສະຕິນຫ້າມບໍ່ໃຫ້
ຊາວເຮັບເຣີຕີດາບຫລືຫອກ. 20ດັ່ງນັ້ນ ພວກອິສຣາເອນຈຶ່ງຕ້ອງເອົາໄຖ ສຽມ ຂວານແລະ
ກ່ຽວຂອງພວກເຂົາໄປໃຫ້ພວກຟີລິດສະຕິນຝົນໃຫ້. 21ສຳລັບຄ່າຝົນຂວານ ແລະເຫລັກປະຕັກ
(ໄມ້ແສ້ບັງຄັບງົວ) ຕົກເປັນເງິນໜຶ່ງຫລຽນ ແລະສອງຫລຽນເປັນຄ່າໄຖແລະສຽມ. 22ສະນັ້ນ
ໃນມື້ສູ້ຮົບມີແຕ່ຊາອູນ ແລະໂຢນາທານລູກຊາຍຂອງເພິ່ນເທົ່ານັ້ນທີ່ມີດາບ ແລະຫອກ ສ່ວນ
ພວກທະຫານອິສຣາເອນບໍ່ມີຫຍັງໝົດ.

23ພວກຟີລິດສະຕິນກໍສົ່ງໝວດທະຫານຂອງພວກເຂົາອອກໄປປ້ອງກັນຢູ່ທາງຜ່ານໄປບ້ານ
ມິກມາດ.

# ບົດທີ 14

## ຄວາມກ້າຫານຂອງໂຢນາທານ

1ມີມື້ໜຶ່ງ ໂຢນາທານໄດ້ເວົ້າກັບຊາຍໜຸ່ມຜູ້ທີ່ຖືອາວຸດໃຫ້ຕົນວ່າ, “ພວກເຮົາຂ້າມໄປຫາຄ້າຍ
ພັກຂອງພວກຟີລິດສະຕິນເທາະ” ການໄປເທື່ອນີ້ໂຢນາທານບໍ່ໄດ້ບອກພໍ່ລາວ.

2ກະສັດຊາອູນກໍຕັ້ງຄ້າຍຕັກຢູ່ກ້ອງຕົ້ນໝາກພິລາໃນບ້ານມິກໂຣນ ຊຶ່ງບໍ່ຢູ່ຫ່າງໄກຈາກ
ເມືອງກິເບອາ ພະອົງມີທະຫານປະມານຫົກຮ້ອຍຄົນ. 3ຄົນເຫລົ່ານີ້ບໍ່ຮູ້ວ່າໂຢນາທານໄດ້ໄປ
ກ່ອນແລ້ວ ປະໂລຫິດທີ່ຖືຫີບສັກສິດນັ້ນຊື່ວ່າ ອາຮີຢາ ຊຶ່ງເປັນລູກຊາຍຂອງອາຮີຕຸບ (ອາຮີ-
ຕຸບເປັນອ້າຍຂອງອີຄາບົດ ຜູ້ເປັນລູກຊາຍຂອງຟີເນຮາດ ລູກຊາຍກົກຂອງເອລີ ປະໂລຫິດ
ຂອງພຣະຜູ້ເປັນເຈົ້າທີ່ເມືອງຊີໂລ).

4ທາງທີ່ໂຢນາທານຜ່ານຂ້າມໄປຫາຄ້າຍພັກຂອງພວກຟີລິດສະຕິນນັ້ນ ໄດ້ມີໂງ່ນຫີນໃຫຍ່
ແລະແຫລມຄົມຢູ່ສອງໂງ່ນ ແຕ່ລະໂງ່ນຢູ່ແຕ່ລະຂ້າງຂອງທາງທີ່ຜ່ານໄປນັ້ນ ກ້ອນໜຶ່ງຊື່ວ່າ
ໂບເຊັດ ແລະກ້ອນໜຶ່ງອີກຊື່ວ່າ ເສເນ 5ກ້ອນໜຶ່ງຢູ່ທາງຂ້າງເບື້ອງເໜືອຂອງທາງຜ່ານໄປຕໍ່-
ໜ້າບ້ານມິກມາດ ອີກກ້ອນໜຶ່ງຢູ່ທາງຂ້າງເບື້ອງໃຕ້ຕໍ່ໜ້າເມືອງເກບາ.

6ໂຢນາທານເວົ້າຕໍ່ຊາຍໜຸ່ມນັ້ນວ່າ, “ໃຫ້ພວກເຮົາຂ້າມໄປຄ້າຍພັກຂອງພວກຟີລິດສະຕິນທີ່
ບໍ່ນັບຖືພຣະເຈົ້າ ບາງທີພຣະຜູ້ເປັນເຈົ້າຈະຊົງຊ່ອຍເຫລືອພວກເຮົາ ຖ້າພຣະອົງຊົງຊ່ອຍ
ເຫລືອກໍບໍ່ມີສິ່ງໃດຈະສາມາດຕ້ານທານໄດ້ ເຖິງພວກເຮົາມີຄົນນ້ອຍກໍຕາມ ພວກເຮົາກໍຈະມີ-
ໄຊຊະນະ.” 7ຊາຍໜຸ່ມຈຶ່ງຕອບວ່າ, “ທ່ານຈະເຮັດຫຍັງ ຂ້ານ້ອຍກໍຍິນດີເຮັດນຳ.”

8-9ໂຢນາທານເວົ້າວ່າ, “ດີແລ້ວ! ພວກເຮົາຈະຂ້າມໄປໃຫ້ພວກມັນເຫັນພວກເຮົາ ຖ້າພວກ
ເຂົາເວົ້າວ່າຈະມາຕີພວກເຮົາ ພວກເຮົາກໍຈະຢູ່ທີ່ນີ້. 10ແຕ່ຖ້າ ພວກເຂົາເວົ້າທ້າທາຍໃຫ້ພວກ
ເຮົາໄປຫາ ພວກເຮົາຈຶ່ງໄປເພາະວ່າຄຳເວົ້າຢ່າງນັ້ນ ຖືເປັນເຄື່ອງໝາຍວ່າ ພຣະຜູ້ເປັນເຈົ້າໄດ້

ຊົງໃຫ້ພວກເຮົາຊະນະ.”

[11]ດັ່ງນັ້ນ ໂຢນາທານ ແລະຊາຍໜຸ່ມນັ້ນ ຈຶ່ງເຮັດໃຫ້ພວກຟີລິດສະຕິນເຫັນ ແລະພວກເຂົາ
ກໍໄດ້ເວົ້າວ່າ “ເບິ່ງພຸ້ນ ມີຊາວເຮັບເຣີບາງຄົນໄດ້ອອກມາຈາກບ່ອນລີ້ຊ້ອນ. [12]ພວກທະຫານ
ຟີລິດສະຕິນກໍຮ້ອງໃສ່ໂຢນາທານ ແລະຊາຍໜຸ່ມນັ້ນວ່າ, “ຈົ່ງຂຶ້ນມາພີ້ ພວກຂ້ອຍມີເລື່ອງຈະ
ບອກເຈົ້າ.” ໂຢນາທານຈຶ່ງເວົ້າຕໍ່ຊາຍທີ່ມານຳວ່າ, “ຕາມຂ້ອຍມາ ພຣະຜູ້ເປັນເຈົ້າໄດ້ຊົງປະ-
ທານໃຫ້ພວກອິສຣາເອນ ຊະນະພວກເຂົາແລ້ວ.”

[13]ໂຢນາທານໄດ້ປີນຂຶ້ນໄປ ຊາຍໜຸ່ມນັ້ນກໍຕິດຕາມລາວໄປ ໂຢນາທານໄດ້ຕໍ່ສູ້ພວກຟີລິດ-
ສະຕິນ ແລະຕີພວກເຂົາຕົກລົງ ແລ້ວຊາຍໜຸ່ມກໍຂ້າພວກເຂົາຖິ້ມ. [14]ໃນການຕໍ່ສູ້ເທື່ອທຳອິດ
ໂຢນາທານ ແລະຊາຍໜຸ່ມນັ້ນໄດ້ຂ້າສັດຕູຢູ່ທີ່ນັ້ນຕາຍໄປປະມານຊາວຄົນ.

[15]ພວກຟີລິດສະຕິນທຸກຄົນທີ່ຢູ່ໃນທົ່ງກໍຢ້ານກົວພວກກອງໂຈນ ແລະພວກທະຫານກໍຕົກ
ສະທ້ານຢ້ານກົວ ແຜ່ນດິນກໍຫວັ່ນໄຫວ ແລະໄດ້ມີການຕົກໃຈຢ່າງຍິ່ງໃຫຍ່ເກີດຂຶ້ນ.

## ພວກຟີລິດສະຕິນເສຍໄຊ

[16]ທະຫານຂອງຊາອູນທີ່ເຝົ້າຍາມຢູ່ທີ່ເມືອງກິເບອາ ໃນເຂດແດນເບັນຢາມິນໄດ້ເຫັນພວກ
ຟີລິດສະຕິນແລ່ນສັບສົນໄປມາ. [17]ຊາອູນຈຶ່ງເວົ້າກັບທະຫານຂອງເພິ່ນວ່າ, “ນັບເບິ່ງດູວ່າ ມີ
ທະຫານຄົນໃດຕາຍໄປແດ່” ເມື່ອພວກເຂົານັບເບິ່ງແລ້ວກໍເຫັນວ່າ ໂຢນາທານ ແລະຊາຍໜຸ່ມທີ່
ຖືອາວຸດໃຫ້ນັ້ນໄດ້ຫາຍໄປ [18]ເມື່ອເປັນເຊັ່ນນີ້ ຊາອູນຈຶ່ງເວົ້າຕໍ່ປະໂລຫິດອາຮີຢາວ່າ, “ຈົ່ງນຳ
ເອົາຫີບຄຳສັນຍາອັນສັກສິດມານີ້ ເພື່ອເຮັດພິທີຈົກສະຫລາກຕໍ່ພຣະພັກພຣະຜູ້ເປັນເຈົ້າ ເພາະ-
ວ່າໃນຄາວນັ້ນຫີບຄຳສັນຍາ ໄດ້ນຳໜ້າພວກອິສຣາເອນໄປ. [19]ເມື່ອຊາອູນກຳລັງເວົ້າຕໍ່ປະໂລ-
ຫິດຢູ່ນັ້ນ ການສັບສົນວຸ້ນວາຍຢູ່ໃນຄ້າຍພັກຂອງພວກຟີລິດສະຕິນກໍຍິ່ງຮ້າຍແຮງຂຶ້ນ ຊາອູນ
ຈຶ່ງເວົ້າຕໍ່ປະໂລຫິດວ່າ, “ບໍ່ຕ້ອງຈົກສະຫລາກ.”

[20]ແລ້ວພະອົງກັບພວກທະຫານ ກໍມຸ້ງໜ້າເຂົ້າໄປໃນສະໜາມຮົບ ເພື່ອໂຈມຕີພວກຟີລິດສະ-
ຕິນທີ່ກຳລັງຕົກຢູ່ໃນຄວາມສັບສົນວຸ້ນວາຍ ແລະຕໍ່ສູ້ກັນເອງ. [21]ພວກເຮັບເຣີທີ່ເຂົ້າຂ້າງຊາວ
ຟີລິດສະຕິນມາແຕ່ກ່ອນ ແລະໄດ້ອາໄສຢູ່ໃນຄ້າຍພັກດຽວກັນກັບພວກເຂົາກໍປ່ຽນໃຈມາຮ່ວມນຳ
ຊາອູນ ແລະໂຢນາທານ. [22]ເມື່ອພວກອິສຣາເອນທີ່ລີ້ຢູ່ເທິງພູນ້ອຍເອຟຣາຢິມໄດ້ຍິນຂ່າວວ່າ
ຊາວຟີລິດສະຕິນກຳລັງແລ່ນປົບໜີ ພວກເຂົາກໍເຂົ້າມາຮ່ວມສົມທົບຕໍ່ສູ້ຊາວຟີລິດສະຕິນຄືກັນ.
[23]ໃນມື້ນັ້ນ ພຣະຜູ້ເປັນເຈົ້າຊົງຊ່ອຍພວກອິສຣາເອນໃຫ້ພົ້ນໄພ ແລະພວກເຂົາໄດ້ໄລ່ຕີສັດຕູ
ໄປຮອດເມືອງ ເບັດ-ອາເວນ.

## ໂຢນາທານລະເມີດຄຳສັນຍາ

[24]ໃນມື້ນັ້ນ ພວກອິສຣາເອນອ່ອນແຮງຍ້ອນບໍ່ໄດ້ກິນເຂົ້າ ເພາະຊາອູນໄດ້ອອກຄຳສັ່ງເດັດ-
ຂາດວ່າ, “ໃນມື້ນີ້ຖ້າຜູ້ໃດກິນເຂົ້າກ່ອນຕາເວັນຕົກ ແລະກ່ອນຂ້ອຍໄດ້ແກ້ແຄ້ນສັດຕູຂອງຂ້ອຍ
ຂໍໃຫ້ຄຳສາບແຊ່ງຈົ່ງຕົກຖືກຜູ້ນັ້ນ.”

[25]ດັ່ງນັ້ນ ຈຶ່ງບໍ່ມີຜູ້ໃດໄດ້ກິນຫຍັງຕະຫລອດມື້ ພວກເຂົາທັງໝົດໄດ້ເຂົ້າໄປໃນປ່າ ແລະພົບ
ຮັງເຜິ້ງຢູ່ທຸກໆ ບ່ອນ. [26]ແຕ່ບໍ່ມີໃຜກ້າເອົາມາກິນ ເພາະພວກເຂົາຢ້ານຄຳສາບແຊ່ງຂອງຊາ-

ອູນ. [27]ແຕ່ໂຢນາທານບໍ່ໄດ້ຍິນພໍ່ຂອງຕົນສາບແຊ່ງ ເພິ່ນຈຶ່ງເອົາໄມ້ເທົ້າແທງຮັງເຜິ້ງ ແລະເອົາ
ນໍ້າເຜິ້ງມາກິນ. [28]ໃນທັນໃດນັ້ນ ເພິ່ນກໍຮູ້ສຶກມີແຮງຂຶ້ນກວ່າເກົ່າ ແລ້ວທະຫານຄົນໜຶ່ງກໍເວົ້າຂຶ້ນ
ວ່າ, "ທຸກຄົນໄດ້ອ່ອນເພຍຍ້ອນຫິວເຂົ້າ ເພາະສະເດັດພໍ່ຂອງທ່ານໄດ້ຂູ່ເຂັນພວກຂ້ານ້ອຍວ່າ
ຖ້າຜູ້ໃດກິນເຂົ້າໃນມື້ນີ້ຈະຖືກສາບແຊ່ງ." [29]ໂຢນາທານຕອບວ່າ, "ພໍ່ຂອງຂ້ອຍໄດ້ສ້າງຄວາມ
ລຳບາກໃຫ້ແກ່ປະຊາຊົນ ແຕ່ເບິ່ງດູວ່າຂ້ອຍຮູ້ສຶກມີແຮງຂຶ້ນກວ່າເກົ່າເມື່ອຂ້ອຍໄດ້ກິນນໍ້າເຜິ້ງ.
[30]ຖ້າວ່າມື້ນີ້ ປະຊາຊົນຂອງພວກເຮົາໄດ້ກິນອາຫານທີ່ພວກເຮົາໄດ້ມາຈາກສັດຕູ ພວກເຂົາຄົງ
ມີແຮງຂ້າພວກຟີລິດສະຕິນໄດ້ຫລາຍຂຶ້ນ."

[31]ໃນມື້ນັ້ນ ພວກອິສຣາເອນໄດ້ຜາບແພ້ພວກຟີລິດສະຕິນຕັ້ງແຕ່ບ້ານມິກມາດຮອດເມືອງ
ອາຢາໂລນ ພວກອິສຣາເອນໄດ້ອ່ອນແຮງຍ້ອນບໍ່ໄດ້ກິນເຂົ້າ. [32]ພວກເຂົາຈຶ່ງແລ່ນໄປເອົາສິ່ງທີ່
ພວກເຂົາຍຶດເອົາມາໄດ້ຈາກສັດຕູ ຄືແກະ ແລະງົວມາຂ້າໃນບ່ອນນັ້ນ ແລ້ວກິນຊີ້ນທີ່ຂ້າໂດຍບໍ່
ໄດ້ເອົາເລືອກອອກ.

[33]ຕໍ່ມາ ມີຄົນມາບອກຊາອູນວ່າ, "ຈົ່ງເບິ່ງແມ ພວກປະຊາຊົນໄດ້ເຮັດຜິດຕໍ່ພຣະຜູ້ເປັນເຈົ້າ
ໂດຍກິນຊີ້ນທີ່ບໍ່ໄດ້ເອົາເລືອດອອກ." ຊາອູນຈຶ່ງຮ້ອງຂຶ້ນວ່າ, "ພວກເຈົ້າເປັນຄົນທໍລະຍົດ ຈົ່ງ
ກິ້ງກ້ອນຫີນໃຫຍ່ນັ້ນມາໃຫ້ຂ້ອຍທີ່ນີ້. [34]ແລ້ວພະອົງກໍອອກຄຳສັ່ງວ່າ, "ຈົ່ງໄປຫາປະຊາຊົນ
ແລະບອກໃຫ້ພວກເຂົາທຸກຄົນນຳເອົາງົວ ແລະແກະຂອງພວກເຂົາມານີ້ ແລ້ວຂ້າສັດເຫລົ່ານັ້ນ
ກິນຢູ່ທີ່ນີ້ ແຕ່ຢ່າເຮັດຜິດຕໍ່ພຣະຜູ້ເປັນເຈົ້າ ໂດຍກິນຊີ້ນທີ່ຂ້າແລ້ວບໍ່ໄດ້ເອົາເລືອດອອກ" ໃນ
ຄືນນັ້ນ ພວກເຂົາທຸກຄົນກໍນຳງົວຂອງຕົນມາຂ້າຢູ່ທີ່ນັ້ນ. [35]ຊາອູນໄດ້ສ້າງແທ່ນບູຊາແດ່ພຣະ-
ຜູ້ເປັນເຈົ້າຊຶ່ງເປັນການສ້າງເທື່ອທຳອິດຂອງພະອົງ.

[36]ຊາອູນໄດ້ເວົ້າຕໍ່ທະຫານຂອງພະອົງວ່າ, "ໃຫ້ພວກເຮົາລົງໄປຕີໄປປຸ້ນ ແລະຂ້າພວກຟີ-
ລິດສະຕິນຕະຫລອດຄືນຈົນແຈ້ງ" ພວກເຂົາຕອບວ່າ, "ຈົ່ງເຮັດຕາມທີ່ພະອົງຄິດວ່າດີ" ແຕ່ປະ-
ໂລຫິດເວົ້າຂຶ້ນວ່າ ຂໍໃຫ້ພວກເຮົາທູນຖາມພຣະເຈົ້າເສຍກ່ອນ." [37]ດັ່ງນັ້ນ ຊາອູນຈຶ່ງທູນຖາມ
ພຣະເຈົ້າວ່າ, "ຂ້ານ້ອຍຕ້ອງໄປສູ້ຮົບກັບພວກຟີລິດສະຕິນອີກບໍ? ແລະພຣະອົງຈະຊົງປະທານ
ໄຊຊະນະໃຫ້ແກ່ຂ້ານ້ອຍບໍ?"

[38]ແຕ່ວ່າໃນມື້ນັ້ນ ພຣະເຈົ້າບໍ່ໄດ້ຕອບເພິ່ນ ຊາອູນຈຶ່ງເວົ້າຕໍ່ຜູ້ນຳປະຊາຊົນວ່າ ຈົ່ງພາກັນມາ
ນີ້ ແລະຊອກຖາມເບິ່ງວ່າ ມື້ນີ້ມີການເຮັດຜິດຫຍັງແດ່? [39]ຂ້ອຍຂໍສັນຍາຕໍ່ພຣະເຈົ້າອົງຊົງມີຊີ-
ວິດຢູ່ ພຣະຜູ້ຊ່ອຍໃຫ້ພົ້ນຂອງຊາວອິສຣາເອນວ່າ, "ຖ້າໂຢນາທານ ລູກຊາຍຂອງຂ້ອຍເປັນຜູ້
ໜຶ່ງທີ່ເຮັດຜິດ ລາວຈະຕ້ອງຖືກຂ້າ" ແຕ່ວ່າ ບໍ່ມີຜູ້ໃດເວົ້າຫຍັງໝົດ.

[40]ແລ້ວຊາອູນເວົ້າຕໍ່ພວກເຂົາວ່າ ພວກເຈົ້າທຸກຄົນຢືນຢູ່ທີ່ນັ້ນ ສ່ວນຂ້ອຍ ແລະໂຢນາທານ
ຈະຢືນຢູ່ທີ່ນີ້". ພວກເຂົາຈຶ່ງຕອບວ່າ, "ຈົ່ງເຮັດຕາມທີ່ພະອົງຊົງຄິດວ່າດີ."

[41]ຊາອູນຕອບພຣະຜູ້ເປັນເຈົ້າຂອງຊາວອິສຣາເອນວ່າ, "ຂ້າແດ່ພຣະຜູ້ເປັນເຈົ້າ ເປັນຫຍັງ
ພຣະອົງຈຶ່ງບໍ່ຊົງຕອບຂ້ານ້ອຍໃນມື້ນີ້? ຂ້າແດ່ພຣະຜູ້ເປັນເຈົ້າຂອງຊາວອິສຣາເອນ ຂໍພຣະອົງ
ຊົງຕອບຂ້ານ້ອຍໂດຍທາງສະຫລາກນີ້ຄື ຖ້າວ່າຄວາມຜິດເປັນຂອງໂຢນາທານ ລູກຊາຍຂອງ
ຂ້ານ້ອຍ ຫລືຂອງຂ້ານ້ອຍເອງ ຂໍພຣະອົງຊົງຕອບໂດຍອຸຣິມ ແຕ່ຖ້າມັນຕົກຖືກພວກອິສຣາ-

ເອນ ໄພ່ພົນຂອງພຣະອົງ ຂໍພຣະອົງຊົງຕອບດ້ວຍ ທູມມິມ ແລ້ວສະຫລາກກໍຕົກຖືກ ໂຢນາທານ
ແລະ ຊາອູນ. [42]ຊາອູນ ຈຶ່ງ ເວົ້າວ່າ, “ຂໍພຣະອົງຊົງຕັດສິນພຣະ ໄທລະຫວ່າງຂ້ານ້ອຍ ແລະ ໂຢ-
ນາທານ ລູກຊາຍຂອງຂ້ານ້ອຍເຖີ້ນ” ແລະສະຫລາກກໍຕົກຖືກ ໂຢນາທານ.

[43]ແລ້ວ ຊາອູນ ຈຶ່ງ ຖາມ ໂຢນາທານ ວ່າ, “ເຈົ້າເຮັດຫຍັງຜິດ?” ໂຢນາທານ ຕອບວ່າ, “ຂ້າ-
ນ້ອຍໄດ້ກິນນ້ຳເຜິ້ງພຽງໜ້ອຍດຽວເທົ່ານັ້ນ ຂ້ານ້ອຍຢູ່ທີ່ນີ້ແລ້ວ ແລະພ້ອມທີ່ຈະຕາຍ.” [44]ຊາ-
ອູນ ເວົ້າຕໍ່ລາວວ່າ, “ຖ້າຂ້ອຍບໍ່ຂ້າເຈົ້າ ຂໍພຣະອົງຊົງປະຫານຊີວິດຂ້ອຍສາ.”

[45]ແຕ່ປະຊາຊົນຕອບ ຊາອູນ ວ່າ, “ຈະ ໃຫ້ ໂຢນາທານ ຜູ້ທີ່ຕີເອົາ ໄຊຊະນະອັນຍິ່ງ ໃຫຍ່ສຳລັບ
ພວກ ອິສຣາເອນ ຖືກຂ້າຕາຍຊັ້ນບໍ? ບໍ່ໄດ້ດອກ ພວກຂ້ານ້ອຍຂໍສັນຍາຕໍ່ ພຣະຜູ້ເປັນເຈົ້າ ຜູ້ຊົງ
ມີຊີວິດຢູ່ວ່າ ແມ່ນແຕ່ຜົມຂອງເພິ່ນກໍຈະບໍ່ສູນເສຍໄປຈາກຫົວຂອງເພິ່ນ ສິ່ງທີ່ເພິ່ນໄດ້ເຮັດມື້ນີ້
ເປັນການເຮັດດ້ວຍຄວາມຊ່ວຍຊ່ອຍຂອງ ພຣະເຈົ້າ” ດັ່ງນັ້ນ ປະຊາຊົນຈຶ່ງຊ່ອຍ ໂຢນາທານບໍ່ໃຫ້
ຖືກຂ້າ.

[46]ຝ່າຍ ຊາອູນ ກໍເຊົາໄລ່ຕິດຕາມພວກ ຟີລິດສະຕິນ ພວກ ຟີລິດສະຕິນ ກໍກັບຄືນເມືອເຂດແດນ
ຂອງພວກເຂົາ.

## ລາຊະການ ແລະຄອບຄົວຂອງຊາອູນ

[47]ໃນ ໄລຍະທີ່ ຊາອູນ ໄດ້ເປັນເຈົ້າຊີວິດຂອງຊາວ ອິສຣາເອນ ພະອົງໄດ້ສູ້ຮົບຕົບຕີກັບສັດຕູ
ຂອງພະອົງທຸກໆ ຄົນ ຄື ຊາວ ໂມອາບ ຊາວ ອຳໂມນ ຊາວ ເອໂດມ ເຈົ້າຊີວິດຊາວ ໂຊບາ
ແລະພວກ ຟີລິດສະຕິນ ທຸກໆ ບ່ອນທີ່ເພິ່ນຕໍ່ສູ້ກໍໄດ້ຮັບໄຊຊະນະ. [48]ພະອົງຕໍ່ສູ້ຢ່າງກ້າຫານ
ແລະໄດ້ ໂຈມຕີພວກ ອາມາເລັກ ພະອົງໄດ້ຊ່ອຍພວກ ອິສຣາເອນ ໃຫ້ພົ້ນຈາກການ ໂຈມຕີ ຂອງ
ພວກສັດຕູທຸກຢ່າງ.

[49]ບັນດາລູກຊາຍຂອງ ຊາອູນ ມີຄື ໂຢນາທານ ອີຊະວີ ແລະ ມັນກີຊົວ ສ່ວນລູກສາວຜູ້ໃຫຍ່
ຊື່ວ່າ ເມຣັບ ແລະຜູ້ນ້ອຍຊື່ວ່າ ມີການ. [50]ມະເຫສີຂອງພະອົງຊື່ວ່າ ອາຮີໂນອາມ ລູກສາວ
ຂອງ ອາຮີມາອາດ ສ່ວນຜູ້ເປັນລຸງຂອງພະອົງຊື່ວ່າ ເນ. [51]ກີເຊພໍ່ຂອງ ຊາອູນ ແລະ ເນພໍ່ຂອງ
ອັບເນ ເປັນລູກຊາຍຂອງ ອາບີເອນ.

[52]ຕະຫລອດ ເວລາທີ່ ຊາອູນ ດຳລົງຊີວິດຢູ່ນັ້ນ ພະອົງໄດ້ສູ້ຮົບກັບພວກ ຟີລິດສະຕິນ ຢ່າງດຸ-
ເດືອດ ເມື່ອພະອົງພົບຊາຍຄົນໃດທີ່ແຂງແຮງ ແລະເຂັ້ມແຂງ ພະອົງກໍເອົາເຂົ້າມາຮັບໃຊ້ຢູ່ໃນ
ກອງທັບຂອງພະອົງ.

# ບົດທີ 15

## ເສິກສົງຄາມຕໍ່ສູ້ກັບຊາວອາມາເລັກ

[1]ຕໍ່ມາ ຊາມູເອນ ໄດ້ເວົ້າຕໍ່ຊາອູນວ່າ, “ຂ້າພະເຈົ້າເປັນຜູ້ທີ່ ພຣະຜູ້ເປັນເຈົ້າ ຊົງສັ່ງ ໃຫ້ເອົານ້ຳ-
ມັນຫົດສົງທ່ານໃຫ້ ເປັນເຈົ້າຊີວິດພວກ ອິສຣາເອນ ໄພ່ພົນຂອງພຣະອົງ ດຽວນີ້ ຈົ່ງຟັງເບິ່ງວ່າ
ພຣະຜູ້ເປັນເຈົ້າ ອົງຊົງ ມີອຳນາດຍິ່ງ ໃຫຍ່ກ່າວຢ່າງໃດ. [2]ພຣະອົງຊົງ ລົງ ໂທດພວກ ອາມາເລັກ
ເພາະວ່າພວກເຂົາຕໍ່ຕ້ານຊາວ ອິສຣາເອນ ໃນເວລາທີ່ພວກເຂົາມາຈາກປະເທດ ເອຢິບ. [3]ຈົ່ງໄປ

ຕໍ່ສູ້ຊາວອາມາເລັກ ແລະທຳລາຍທຸກໆ ຢ່າງທີ່ພວກເຂົາມີ ຢ່າເມດຕາປານີພວກເຂົາເລີຍ ຈົ່ງ
ຂ້າຜູ້ຊາຍ ຜູ້ຍິງ ເດັກນ້ອຍ ແລະເດັກອ່ອນທຸກໆ ຄົນ ພ້ອມງົວ ແກະ ອູດແລະລໍ.”

4ຊາອູນຈຶ່ງໄດ້ສັ່ງກອງທະຫານຂອງພະອົງເຂົ້າມາໂຮມກັນ ແລ້ວໄດ້ກວດເບິ່ງທີ່ເມືອງເຕລາ-
ຢີມ ຊຶ່ງມີທະຫານອິສຣາເອນຢູ່ສອງແສນຄົນ ແລະທະຫານຢູດາສິບພັນຄົນ. 5ພະອົງພ້ອມທັງ
ທະຫານກໍໄປຍັງເມືອງອາມາເລັກ ແລະຄອຍຖ້າດັກໂຈມຕີຢູ່ໃນຮ່ອມຫ້ວຍ. 6ພະອົງໄດ້ເຕືອນ
ຊາວເກນິດວ່າ, “ຈົ່ງພາກັນໜີຈາກຊາວອາມາເລັກ ເພື່ອວ່າເຮົາຈະບໍ່ໄດ້ຂ້າພວກເຈົ້າພ້ອມກັບ
ພວກເຂົາ ເພາະວ່າພວກເຈົ້າໄດ້ເມດຕາຕໍ່ຊາວອິສຣາເອນເມື່ອພວກເຂົາອອກມາຈາກປະເທດ
ເອຢິບ” ແລ້ວພວກເຂົາກໍໜີໄປ.

7ຊາອູນໄດ້ເຮັດໃຫ້ຊາວອາມາເລັກເສຍໄຊ ຕັ້ງແຕ່ ຮາວິລາ ຈົນຮອດບ້ານນາຊູເຣ ຢູ່ທາງ
ທິດຕາເວັນອອກຂອງປະເທດເອຢິບ. 8ພະອົງໄດ້ຂ້າປະຊາຊົນທັງໝົດ ແຕ່ໄດ້ຈັບເອົາເຈົ້າຊີວິດ
ມາ. 9ຊາອູນ ແລະທະຫານຂອງພະອົງໄດ້ປ່ອຍໃຫ້ອັກອາກມີຊີວິດຢູ່ ແລະບໍ່ໄດ້ຂ້າແກະ ງົວ
ໂຕທີ່ງາມທີ່ສຸດ ພ້ອມທັງລູກຂອງມັນ ຫລືທຳລາຍສິ່ງຂອງທີ່ມີຄ່າເລີຍ ແຕ່ວ່າພວກເຂົາໄດ້ທຳ-
ລາຍທຸກໆ ສິ່ງທີ່ບໍ່ມີປະໂຫຍດ ແລະບໍ່ມີຄ່າ.

## ພຣະເຈົ້າປົດຊາອູນອອກຈາກການເປັນເຈົ້າຊີວິດ

10-11ພຣະຜູ້ເປັນເຈົ້າຊົງກ່າວຕໍ່ຊາມູເອນວ່າ, “ເຮົາເສຍໃຈຫລາຍທີ່ໄດ້ແຕ່ງຕັ້ງໃຫ້ຊາອູນ
ເປັນເຈົ້າຊີວິດ ລາວໄດ້ຫັນໜີຈາກເຮົາ ແລະບໍ່ໄດ້ເຊື່ອຟັງຄຳສັ່ງຂອງເຮົາ” ຊາມູເອນກໍໃຈຮ້າຍ
ເພິ່ນໄດ້ອ້ອນວອນຂໍກັບພຣະຜູ້ເປັນເຈົ້າຕະຫລອດທັງຄືນ ແລ້ວເພິ່ນໄດ້ອອກໄປພົບຊາອູນແຕ່
ເຊົ້າໆ.

12ແຕ່ໄດ້ຍິນຂ່າວວ່າຊາອູນໄດ້ໄປເມືອງກາເມນ ບ່ອນທີ່ພະອົງກໍ່ສ້າງອະນຸສາວະລີໄວ້ສຳ-
ລັບພະອົງເອງ ແລ້ວໄດ້ໄປເມືອງກິນການ. 13ຊາມູເອນໄດ້ໄປຫາຊາອູນ ເມື່ອຊາອູນເຫັນເພິ່ນ
ກໍຄຳນັບ ແລະເວົ້າວ່າ, “ຊາມູເອນເອີຍ ຂໍພຣະຜູ້ເປັນເຈົ້າຊົງອວຍພອນທ່ານສາ ເຮົາໄດ້ເຊື່ອ
ຟັງຄຳສັ່ງຂອງພຣະເຈົ້າແລ້ວ.”

14ຊາມູເອນຈຶ່ງຖາມວ່າ, “ເປັນຫຍັງຂ້າພະເຈົ້າຈຶ່ງໄດ້ຍິນສຽງຮ້ອງຂອງຝູງງົວ ແລະຝູງ
ແກະ?” 15ຊາອູນຕອບວ່າ, “ທະຫານຂອງເຮົາໄດ້ເອົາສັດເຫລົ່ານັ້ນມາຈາກຊາວອາມາເລັກ
ພວກເຂົາໄດ້ເອົາຝູງແກະ ຝູງງົວທີ່ດີໄວ້ ເພື່ອຖວາຍເປັນເຄື່ອງບູຊາແດ່ພຣະຜູ້ເປັນເຈົ້າຂອງ
ທ່ານ ແລະສ່ວນທີ່ເຫລືອນັ້ນພວກເຮົາໄດ້ທຳລາຍຖິ້ມໝົດແລ້ວ.”

16ຊາມູເອນເວົ້າວ່າ, “ຢຸດກ່ອນ ຂ້າພະເຈົ້າຈະບອກພະອົງວ່າ ພຣະຜູ້ເປັນເຈົ້າຊົງກ່າວວ່າ
ຢ່າງໃດກັບຂ້າພະເຈົ້າໃນຄືນນີ້.” ຊາອູນຈຶ່ງເວົ້າວ່າ “ຂໍຈົ່ງບອກເຮົາແດ່”. 17ຊາມູເອນຕອບວ່າ,
“ເຖິງແມ່ນວ່າ ພະອົງໄດ້ພິຈາລະນາຕົວເອງວ່າບໍ່ມີຄວາມສຳຄັນ ແຕ່ພະອົງກໍເປັນຜູ້ນຳຕະກູນ
ອິສຣາເອນ ພຣະຜູ້ເປັນເຈົ້າຊົງເອົານ້ຳມັນຫົດສົງພະອົງ ໃຫ້ເປັນເຈົ້າຊີວິດຂອງອິສຣາເອນ.
18ພຣະເຈົ້າໄດ້ຊົງສັ່ງພະອົງໃຫ້ອອກໄປທຳລາຍພວກຄົນຊົ່ວຮ້າຍເຫລົ່ານີ້ໃນເມືອງອາມາເລັກ
ພະອົງຊົງບອກໃຫ້ຕໍ່ສູ້ຈົນຂ້າພວກເຂົາຖິ້ມໝົດ ແລ້ວເປັນຫຍັງພະອົງຈຶ່ງບໍ່ເຊື່ອຟັງພຣະຜູ້ເປັນ-
ເຈົ້າ? 19ເປັນຫຍັງຈຶ່ງເອົາສິ່ງຂອງເຫລົ່ານີ້? ແລະໄດ້ເຮັດໃນສິ່ງທີ່ພຣະຜູ້ເປັນເຈົ້າບໍ່ຊົງພໍພຣະ-

ໄທ."
20ຊາອູນໄດ້ເວົ້າວ່າ, "ເຮົາໄດ້ເຊື່ອຟັງພຣະຜູ້ເປັນເຈົ້າ ໄດ້ອອກໄປເຮັດຕາມຄຳທີ່ພຣະອົງຊົງ
ບອກຄື ເຮົາໄດ້ນຳເອົາເຈົ້າຊີວິດອັກອາກມາ ແລ້ວຂ້າຊາວອາມາເລັກທຸກຄົນ. 21ແຕ່ວ່າ ທະ-
ຫານຂອງເຮົາບໍ່ໄດ້ຂ້າແກະ ງົວໂຕງາມທີ່ສຸດຊຶ່ງພວກເຂົາຍຶດມາໄດ້ ພວກເຂົາກັບນຳສັດເຫລົ່າ-
ນັ້ນມາເມືອງກິນການ ເພື່ອເຜົາບູຊາແດ່ພຣະຜູ້ເປັນເຈົ້າຂອງທ່ານ."
22ຊາມູເອນເວົ້າວ່າ "ພຣະຜູ້ເປັນເຈົ້າຊົງຕ້ອງການຢາກໃຫ້ມະນຸດເຊື່ອຟັງ ຫລືຖວາຍບູຊາ
ແດ່ພຣະອົງ ສິ່ງທີ່ຖືກຄື ການເຊື່ອຟັງພຣະອົງດີກວ່າເອົາແກະໂຕງາມທີ່ສຸດມາຖວາຍເປັນເຄື່ອງ
ບູຊາແດ່ພຣະອົງ. 23ການກະບົດຕໍ່ສູ້ພຣະອົງເປັນການຊົ່ວຮ້າຍເທົ່າກັບການໃຊ້ເວດມົນຄາຖາ
ແລະຄວາມຈອງຫອງກໍແມ່ນບາບເທົ່າກັບການຂາບໄຫວ້ຮູບພະ ຍ້ອນວ່າພະອົງໄດ້ປະຖິ້ມຄຳສັ່ງ
ຂອງພຣະເຈົ້າ ພຣະເຈົ້າຈຶ່ງຊົງປົດພະອົງອອກຈາກຕຳແໜ່ງເຈົ້າຊີວິດ."
24ຊາອູນຈຶ່ງເວົ້າວ່າ, "ເຮົາໄດ້ເຮັດຜິດຄື ບໍ່ໄດ້ເຊື່ອຟັງຄຳສັ່ງຂອງພຣະຜູ້ເປັນເຈົ້າ ແລະຄຳ
ແນະນຳຂອງທ່ານ ກໍເພາະວ່າເຮົາຢ້ານທະຫານຂອງເຮົາ ເຮົາຈຶ່ງເຮັດຕາມທີ່ພວກເຂົາຕ້ອງ-
ການ. 25ແລະດຽວນີ້ ເຮົາຂໍຮ້ອງທ່ານໃຫ້ອະໄພຄວາມຜິດຂອງເຮົາ ແລະກັບຄືນໄປກັບເຮົາເພື່ອ
ວ່າເຮົາຈະໄດ້ນະມັດສະການພຣະຜູ້ເປັນເຈົ້າ."
26ຊາມູເອນຕອບວ່າ, "ຂ້າພະເຈົ້າຈະບໍ່ກັບຄືນໄປກັບພະອົງ ເພາະພະອົງໄດ້ປະຖິ້ມຄຳສັ່ງ
ຂອງພຣະຜູ້ເປັນເຈົ້າແລ້ວ ແລະພຣະເຈົ້າໄດ້ປົດພະອົງອອກຈາກຕຳແໜ່ງເຈົ້າຊີວິດຂອງພວກ
ອິສຣາເອນ."
27ເມື່ອຊາມູເອນຈະກັບຫລັງອອກໜີໄປ, ຊາອູນກໍດຶງສາຍເສື້ອຄຸມຂອງເພິ່ນຈົນຂາດ. 28ຊາ-
ມູເອນເວົ້າຕໍ່ພະອົງວ່າ, "ມື້ນີ້ ພຣະຜູ້ເປັນເຈົ້າຈະຍົກລາຊະອານາຈັກອິສຣາເອນໜີຈາກພະອົງ
ແລະຈະເອົາໃຫ້ຜູ້ອື່ນທີ່ດີກວ່າພະອົງ. 29ພຣະເຈົ້າອົງຍິ່ງໃຫຍ່ຂອງຊາວອິສຣາເອນບໍ່ຕົວະ ຫລື
ບໍ່ຊົງປ່ຽນພຣະໄທຄືມະນຸດ." 30ຊາອູນກໍຕອບວ່າ, "ເຮົາໄດ້ເຮັດຜິດ ແຕ່ຂໍທ່ານຈົ່ງໃຫ້ຄວາມ
ນັບຖືແກ່ເຮົາຕໍ່ໜ້າພວກຜູ້ນຳປະຊາຊົນຂອງເຮົາ ແລະຕໍ່ໜ້າຊາວອິສຣາເອນທຸກຄົນ ຂໍທ່ານຈົ່ງ
ກັບຄືນໄປກັບເຮົາ ເພື່ອເຮົາຈະໄດ້ນະມັດສະການພຣະຜູ້ເປັນເຈົ້າຂອງທ່ານ." 31ດັ່ງນັ້ນ ຊາມູ-
ເອນຈຶ່ງໄດ້ກັບຄືນເມືອກັບຊາອູນ ແລະຊາອູນກໍໄດ້ນະມັດສະການພຣະຜູ້ເປັນເຈົ້າ.
32ຕໍ່ມາ ຊາມູເອນໄດ້ສັ່ງວ່າ, "ຈົ່ງພາເຈົ້າຊີວິດອັກອາກມາຫາຂ້າພະເຈົ້າຢູ່ທີ່ນີ້" ອັກອາກກໍ
ເຂົ້າມາຫາເພິ່ນ ດ້ວຍຄວາມຢ້ານ ສັ່ນ ແລະທັງຄິດໃນໃຈວ່າ, "ການຕາຍນີ້ຊ່າງເປັນການຂົມ-
ຂື່ນແທ້." 33ຊາມູເອນໄດ້ເວົ້າວ່າ "ດາບຂອງເຈົ້າໄດ້ເຮັດໃຫ້ແມ່ຫລາຍຄົນສູນເສຍລູກ ດັ່ງນັ້ນ
ແມ່ຂອງເຈົ້າຈະສູນເສຍລູກເຊັ່ນກັນ" ແລ້ວຊາມູເອນໄດ້ຂ້າອັກອາກ ແລະຕັດເປັນທ່ອນໆ ຕໍ່-
ໜ້າແທ່ນບູຊາທີ່ເມືອງກິນການ.
34ແລ້ວຊາມູເອນກໍໄປເມືອງຣາມາ ສ່ວນເຈົ້າຊີວິດຊາອູນກໍໄປຍັງວັງຂອງພະອົງທີ່ເມືອງກິ-
ເບອາ. 35ຕໍ່ມາ ຕະຫລອດທີ່ຊາມູເອນມີຊີວິດຢູ່ ເພິ່ນບໍ່ໄດ້ເຫັນເຈົ້າຊີວິດຊາອູນອີກຈັກເທື່ອ
ແຕ່ເພິ່ນກໍເສົ້າເສຍໃຈນຳພະອົງຫລາຍ ສ່ວນພຣະຜູ້ເປັນເຈົ້າກໍຊົງເສຍພຣະໄທ ທີ່ໄດ້ແຕ່ງຕັ້ງ
ໃຫ້ຊາອູນເປັນເຈົ້າຊີວິດຂອງຊາວອິສຣາເອນ.

# ບົດທີ 16

## ຊາມູເອນແຕ່ງຕັ້ງດາວິດໃຫ້ເປັນກະສັດ

1ພຣະຜູ້ເປັນເຈົ້າຊົງກ່າວຕໍ່ຊາມູເອນວ່າ, “ເຈົ້າຍັງຈະໂສກເສົ້າສະຫລົດໃຈນຳຊາອູນອີກດົນ
ປານໃດ ເຮົາໄດ້ປົດລາວອອກຈາກຕຳແໜ່ງເຈົ້າຊີວິດຂອງອິສຣາເອນແລ້ວ ຈົ່ງຖືເອົານໍ້າມັນໄປ
ທີ່ເມືອງເບັດເລເຮັມ ເຮົາຈະສົ່ງເຈົ້າໄປພົບຊາຍຄົນໜຶ່ງທີ່ມີຊື່ວ່າ ເຢຊີ ຢູ່ທີ່ນັ້ນ ເຮົາໄດ້ເລືອກ
ເອົາຜູ້ໜຶ່ງ ໃນຈຳນວນລູກຊາຍຂອງລາວໃຫ້ເປັນເຈົ້າຊີວິດ.”
2ຊາມູເອນຈຶ່ງທູນຖາມວ່າ, “ຂ້ານ້ອຍຈະເຮັດການນີ້ໄດ້ຢ່າງໃດ? ຖ້າຊາອູນໄດ້ຍິນເລື່ອງນີ້
ລາວກໍຈະມາຂ້າຂ້ານ້ອຍ.” ພຣະຜູ້ເປັນເຈົ້າຊົງຕອບວ່າ, “ໃຫ້ເຈົ້າເອົາງົວນ້ອຍໄປນຳ ແລະໃຫ້
ເຈົ້າເວົ້າວ່າເຈົ້າມາຖວາຍເຄື່ອງບູຊາແກ່ພຣະຜູ້ເປັນເຈົ້າ. 3ຈົ່ງເຊີນເຢຊີມາໃນການຖວາຍນັ້ນ
ແລ້ວເຮົາຈະບອກເຈົ້າວ່າຄວນຈະເຮັດຢ່າງໃດຕໍ່ໄປ ແລະເຈົ້າຈົ່ງເອົານໍ້າມັນຫົດສົງຊາຍທີ່ເຮົາຈະ
ໃຫ້ເປັນເຈົ້າຊີວິດນັ້ນ.”
4ຊາມູເອນກໍເຮັດຕາມທີ່ພຣະຜູ້ເປັນເຈົ້າຊົງສັ່ງ ແລະໄດ້ເດີນທາງໄປເມືອງ ເບັດເລເຮັມ
ພວກເຖົ້າແກ່ໃນເມືອງນີ້ກໍອອກມາພົບເພິ່ນດ້ວຍຄວາມຢ້ານກົວ ແລະຖາມວ່າ, “ທ່ານເອີຍ ການ
ມາຢາມນີ້ເປັນການມາຢ່າງສັນຕິບໍ?” 5ຊາມູເອນຕອບວ່າ, “ຂ້າພະເຈົ້າມາຖວາຍເຄື່ອງບູຊາແດ່
ພຣະຜູ້ເປັນເຈົ້າ ຈົ່ງຊຳລະຕົວໃຫ້ບໍລິສຸດແລ້ວມານຳຂ້າພະເຈົ້າ” ແລ້ວເພິ່ນໄດ້ບອກເຢຊີພ້ອມ
ທັງລູກຊາຍຊຳລະຕົວໃຫ້ບໍລິສຸດ ແລະເຊື້ອເຊີນພວກເຂົາມາຮ່ວມ ໃນການຖວາຍເຄື່ອງບູຊາ
ດ້ວຍ.
6ເມື່ອພວກເຂົາມາຮອດ ຊາມູເອນກໍເຫັນເອລີອາບລູກຊາຍຂອງອີຊາຍ ຈຶ່ງຄິດໃນໃຈວ່າ,
“ຊາຍທີ່ຢືນຢູ່ຕໍ່ພຣະພັກຂອງພຣະຜູ້ເປັນເຈົ້ານັ້ນຕ້ອງແມ່ນຜູ້ທີ່ພຣະອົງໄດ້ຊົງເລືອກໄວ້ແນ່-
ນອນ.” 7ແຕ່ວ່າ ພຣະຜູ້ເປັນເຈົ້າຊົງກ່າວຕໍ່ເພິ່ນວ່າ, “ຢ່າສົນໃຈນຳຮູບຮ່າງອັນຈົບງາມຂອງ
ລາວ ເຮົາບໍ່ຍອມເອົາລາວ ເພາະວ່າການຕັດສິນໃຈຂອງເຮົາບໍ່ຄືຂອງມະນຸດ ມະນຸດເບິ່ງແຕ່ສິ່ງ
ທີ່ຢູ່ພາຍນອກເທົ່ານັ້ນ ແຕ່ວ່າເຮົາເບິ່ງພາຍໃນຈິດໃຈ.”
8ແລ້ວເຢຊີກໍເອີ້ນ ອາບີນາດາບລູກຊາຍຂອງເພິ່ນມາ ແລ້ວພາໄປຫາຊາມູເອນ ແຕ່ຊາມູ-
ເອນເວົ້າວ່າ, “ບໍ່ແມ່ນ ພຣະຜູ້ເປັນເຈົ້າບໍ່ໄດ້ຊົງເລືອກເອົາລາວ.” 9ເຢຊີພາຊາມມາເຂົ້າມາອີກ
ຊາມູເອນກໍບອກວ່າ, “ບໍ່ແມ່ນ ພຣະຜູ້ເປັນເຈົ້າບໍ່ໄດ້ຊົງເລືອກເອົາລາວ.” 10ແຕ່ແລ້ວ ເຢຊີກໍພາ
ລູກຊາຍທັງເຈັດຄົນຂອງເພິ່ນມາຫາຊາມູເອນ ຊາມູເອນຈຶ່ງເວົ້າຕໍ່ເພິ່ນວ່າ, “ບໍ່ແມ່ນ ພຣະຜູ້-
ເປັນເຈົ້າບໍ່ໄດ້ຊົງເລືອກເອົາໃຜຈັກຄົນໃນຈຳນວນພວກນີ້.” 11ແລ້ວຊາມູເອນຖາມຕໍ່ໄປວ່າ,
“ທ່ານຍັງມີລູກຊາຍອີກຢູ່ບໍ?” ເຢຊີຕອບວ່າ, “ຍັງມີລູກຊາຍຫລ້າຢູ່ ແຕ່ດຽວນີ້ລາວໄປລ້ຽງ
ແກະ.” ຊາມູເອນຈຶ່ງເວົ້າວ່າ, “ຈົ່ງໄປນຳລາວມານີ້ ພວກເຮົາຈະບໍ່ຖວາຍເຄື່ອງບູຊາຈົນກວ່າ
ລາວຈະມາ.”
12ເຢຊີກໍສົ່ງຄົນໄປນຳເອົາລາວມາ ລາວເປັນຄົນງາມ ເປັນຊາຍໜຸ່ມທີ່ມີສຸຂະພາບສົມບູນດີ
ແລະຕາຂອງລາວກໍມີແວວ ພຣະຜູ້ເປັນເຈົ້າຈຶ່ງຊົງກ່າວຕໍ່ຊາມູເອນວ່າ, “ແມ່ນຄົນນີ້ແຫລະ ຈົ່ງ
ເອົານໍ້າມັນຫົດສົງລາວເສຍ.” 13ຊາມູເອນຈຶ່ງເອົານໍ້າມັນມາຫົດສົງດາວິດ ໃຫ້ເປັນເຈົ້າຊີວິດຕໍ່-

ໜ້າພວກອ້າຍນ້ອງຂອງລາວ ພຣະວິນຍານ ຂອງ ພຣະຜູ້ເປັນເຈົ້າ ກໍຊົງສະຖິດຢູ່ກັບ ດາວິດ
ແລະຊົງຢູ່ກັບລາວຕັ້ງແຕ່ມື້ນັ້ນມາ ແລ້ວຊາມູເອນກໍກັບຄືນເມືອບ້ານຣາມາ.

### ດາວິດທີ່ພະລາຊະວັງ

14ພຣະວິນຍານ ຂອງ ພຣະຜູ້ເປັນເຈົ້າ ກໍຊົງໜີຈາກ ຊາອູນ ໄປ ແລ້ວ ພຣະຜູ້ເປັນເຈົ້າ ຊົງສົ່ງ
ວິນຍານຊົ່ວເຂົ້າມາທໍລະມານພະອົງ. 15ພວກຄົນຮັບໃຊ້ຈຶ່ງທູນພະອົງວ່າ, "ພວກຂ້ານ້ອຍໄດ້ຮູ້
ວ່າ ວິນຍານຊົ່ວທີ່ສົ່ງມາຈາກ ພຣະເຈົ້າ ໄດ້ທໍລະມານພະອົງ. 16ຂ້າແດ່ພະອົງ ຂໍຊົງອອກຄຳສັ່ງ
ມາ ແລ້ວພວກຂ້ານ້ອຍຈະຊອກຫາຄົນທີ່ຮູ້ຈັກດີດພິນມາໃຫ້ ເວລາພະອົງມີວິນຍານຊົ່ວສິງຢູ່ໃນ
ພະອົງ ຊາຍຄົນນັ້ນກໍຈະດີດພິນຂອງລາວ ແລະພະອົງກໍຈະດີຄືເກົ່າອີກ." 17ຊາອູນ ຈຶ່ງອອກຄຳ
ສັ່ງໃຫ້ພວກເຂົາວ່າ, "ຈົ່ງໄປຊອກຫາຜູ້ນັ້ນແລ້ວພາມາຫາເຮົາ." 18ມີຄົນໜຶ່ງໃນພວກຂ້າໃຊ້ຂອງ
ເພິ່ນເວົ້າວ່າ, "ມີທ່ານ ເຢຊີ ຄົນເມືອງ ເບັດເລເຮັມ ເພິ່ນມີລູກຊາຍຜູ້ໜຶ່ງທີ່ຫລິ້ນດົນຕີເກ່ງ ນອກນີ້
ລາວຍັງເປັນນັກຮົບທີ່ກ້າຫານອີກດ້ວຍ ເປັນຄົນກ້າປາກກ້າເວົ້າ ແລະທັງງາມອີກດ້ວຍ ພຣະຜູ້-
ເປັນເຈົ້າກໍຊົງສະຖິດຢູ່ກັບລາວ."

19ດັ່ງນັ້ນ ຊາອູນ ຈຶ່ງສົ່ງຄົນນຳຂ່າວໄປຫາ ເຢຊີ ໂດຍມີເນື້ອຄວາມວ່າ, "ຂໍໃຫ້ສົ່ງ ດາວິດ ລູກ
ຊາຍຜູ້ລ້ຽງຝູງແກະນັ້ນມາຫາເຮົາ." 20ເຢຊີກໍສົ່ງ ດາວິດ ໄປຫາຊາອູນ ພ້ອມທັງຖົງໜັງເຫລົ້າ
ອະງຸ່ນ ແບ້ນ້ອຍ ແລະລໍທີ່ບັນທຸກເຂົ້າຈີ່. 21ດາວິດໄດ້ເຂົ້າເຝົ້າຊາອູນ ແລະໄດ້ເຂົ້າຮັບລາຊະ-
ການນຳພະອົງ ຊາອູນພໍໃຈໃນລາວຫລາຍ ແລະໃຫ້ລາວເປັນຄົນຖືອາວຸດຂອງພະອົງ. 22ແລ້ວ
ຊາອູນກໍສົ່ງຂ່າວຫາ ເຢຊີວ່າ, "ເຮົາພໍໃຈກັບ ດາວິດ ຂໍໃຫ້ລາວຢູ່ໃນວັງລາຊະການຂອງເຮົາພີ້."

23ເມື່ອວິນຍານຊົ່ວທີ່ສົ່ງມາຈາກ ພຣະເຈົ້າ ເຂົ້າສິງຊາອູນ ດາວິດກໍຈັບເອົາພິນຂອງລາວອອກ
ມາດີດ ແລ້ວວິນຍານຊົ່ວກໍໜີຈາກໄປ ແລະຊາອູນກໍຮູ້ສຶກສະບາຍຂຶ້ນ ແລະເປັນປົກກະຕິຄື-
ເກົ່າ.

## ບົດທີ 17

### ໂກລີອາດທ້າທາຍຊາວອິສຣາເອນ

1ພວກ ຟີລິດສະຕິນ ໄດ້ທ້ອນໂຮມກຳລັງເຂົ້າສູ່ສົງຄາມໃນເມືອງ ໂສໂກ ທີ່ແຂວງຢູດາ ພວກ
ເຂົາໄດ້ຕັ້ງຄ້າຍພັກຢູ່ບ່ອນໜຶ່ງຊຶ່ງເອີ້ນວ່າ ເຂດແດນເລືອດ ຢູ່ລະຫວ່າງກາງເມືອງ ໂສໂກ ແລະ
ເມືອງ ອາເຊກາ ໃນ ເອເຟັດ-ດຳມີມ. 2ສ່ວນຊາອູນ ແລະຊາວ ອິສຣາເອນ ກໍພາກັນມາຕັ້ງຄ້າຍ
ພັກຢູ່ຮ່ອມພູຕົ້ນກໍ່ ຊຶ່ງເປັນບ່ອນທີ່ພວກເຂົາຕຽມຕໍ່ສູ້ກັບພວກ ຟີລິດສະຕິນ. 3ພວກ ຟີລິດສະຕິນ
ໄດ້ໄປຕັ້ງຄ້າຍພັກຢູ່ ເທິງພູນ້ອຍໜ່ວຍໜຶ່ງກ່ອນແລ້ວ ພວກ ອິສຣາເອນ ກໍມາຟາກຮ່ອມພູໜ່ວຍ
ໜຶ່ງອີກ.

4ແລ້ວມີຊາຍຄົນໜຶ່ງຊື່ວ່າ ໂກລີອາດ ເປັນຊາວ ເມືອງ ກັດ ໄດ້ອອກຈາກຄ້າຍພັກຂອງພວກ
ຟີລິດສະຕິນ ມາທ້າທາຍພວກ ອິສຣາເອນ ລາວເປັນຄົນສູງປະມານຫົກສອກ. 5ລາວໃສ່ໝວກ
ທອງສຳລິດ ແລະນຸ່ງເສື້ອທອງສຳລິດໜັກປະມານແປດສິບກິໂລກລາມ. 6ສ່ວນຂາຂອງລາວກໍ
ສວມທອງສຳລິດດ້ວຍ ລາວພາຍຫລາວທີ່ເຮັດດ້ວຍທອງສຳລິດ. 7ຄັນຫອກຂອງລາວໜາເທົ່າ

ກັບໄມ້ກຳຕ່ຳຫູກ ແລະໃນປາຍຫອກນັ້ນໜັກປະມານສິບກິໂລກລາມ ທະຫານຜູ້ທີ່ຖືແຜ່ນເຫລັກ
ຕ້ານທານຂອງລາວກໍຍ່າງອອກໜ້າ.
[8]ໂກລີອາດ ໄດ້ຢືນຮ້ອງແຜດສຽງໃສ່ພວກອິສຣາເອນວ່າ, “ພວກສູກຳລັງເຮັດຫຍັງຢູ່ນີ້ ມາ-
ຕີເສິກບໍ? ກູເປັນຄົນຟີລິດສະຕິນ ພວກສູເປັນທາດຂອງຊາອູນ ຈົ່ງເລືອກເອົາທະຫານຜູ້ໜຶ່ງ
ໃນພວກສູອອກມາສູ້ຮົບກັບກູດຸ. [9]ຖ້າມັນຊະນະ ແລະຂ້າກູໄດ້ ພວກກູຈະຍອມເປັນທາດຂອງ
ພວກສູ. [10]ດຽວນີ້ ກູຂໍທ້າທາຍກອງທັບອິສຣາເອນຢູ່ບ່ອນນີ້ ກູຂໍໃຫ້ພວກສູເລືອກເອົາໃຜກໍໄດ້
ອອກມາຕໍ່ສູ້ກັບກູ.” [11]ເມື່ອຊາອູນ ແລະທະຫານຂອງພະອົງໄດ້ຍິນດັ່ງນັ້ນ ພວກເພິ່ນກໍມີຄວາມ
ຢ້ານກົວຫລາຍ.

## ດາວິດຢູ່ໃນຄ້າຍພັກຂອງຊາອູນ

[12]ດາວິດເປັນລູກຊາຍຂອງເຢຊີ ຊາວເອຟຣາທາ ຊຶ່ງມາຈາກເມືອງເບັດເລເຮັມໃນຢູດາ
ເຢຊີມີລູກຊາຍແປດຄົນ ໃນຄາວທີ່ຊາອູນເປັນເຈົ້າຊີວິດຢູ່ນັ້ນເຢຊີກໍເຖົ້າແກ່ແລ້ວ. [13]ສ່ວນລູກ
ຊາຍໃຫຍ່ສາມຄົນຂອງເພິ່ນໄດ້ໄປຕີເສິກກັບຊາອູນ ຜູ້ກົກຊື່ວ່າ ເອລີອາບ ຜູ້ຕໍ່ມາຊື່ວ່າ ອາບີ-
ນາດາບ ແລະຜູ້ທີສາມຊື່ວ່າ ຊາມມາ. [14]ສ່ວນດາວິດເປັນລູກຊາຍຫລ້າ ເວລາອ້າຍທັງສາມ
ຂອງລາວຢູ່ນຳຊາອູນນັ້ນ. [15]ລາງເທື່ອດາວິດກໍລາຊາອູນກັບຄືນມາເບິ່ງຝູງແກະຂອງພໍ່ທີ່ເມືອງ
ເບັດເລເຮັມຢູ່ເລື້ອຍໆ.
[16]ສ່ວນໂກລີອາດກໍທ້າທາຍຊາວອິສຣາເອນຢູ່ທຸກເຊົ້າທຸກແລງ ເປັນເວລາສີ່ສິບມື້. [17]ມື້ໜຶ່ງ
ເຢຊີໄດ້ເວົ້າຕໍ່ດາວິດວ່າ, “ຈົ່ງເອົາເຂົ້າຂົ້ວສາມໝື່ນ ແລະເຂົ້າຈີ່ສິບກ້ອນນີ້ ໄປໃຫ້ພວກອ້າຍ
ຂອງເຈົ້າຢູ່ໃນຄ້າຍ. [18]ແລະຈົ່ງເອົາເນີຍສິບກ້ອນນີ້ໃຫ້ແກ່ທ່ານນາຍພັນ ຈົ່ງເບິ່ງວ່າພວກອ້າຍ
ຂອງເຈົ້າພາກັນຢູ່ຢ່າງໃດ ແລະໃຫ້ເຈົ້າເອົາຂອງບາງສິ່ງບາງຢ່າງຈາກພວກເຂົາມາ ເພື່ອສະ-
ແດງວ່າເຈົ້າໄດ້ເຫັນພວກເຂົາ ແລະຮູ້ວ່າພວກເຂົາສະບາຍດີ. [19]ດຽວນີ້ ເຈົ້າຊີວິດຊາອູນກັບ
ພວກອ້າຍຂອງເຈົ້າ ແລະພວກອິສຣາເອນຄົນອື່ນໆ ກໍຢູ່ໃນຮ່ອມພູຕົ້ນກໍ່ ຊຶ່ງກຳລັງສູ້ຮົບກັບ
ພວກຟີລິດສະຕິນ.”
[20]ເຊົ້າມື້ໃໝ່ມາ ດາວິດໄດ້ລຸກແຕ່ເດິກໆ ລາວຝາກຝູງແກະໄວ້ນຳຄົນອື່ນ ແລະຖືເອົາອາ-
ຫານໄປຕາມບ່ອນທີ່ເຢຊີໄດ້ບອກ ລາວໄປຮອດຄ້າຍພັກພໍດີກັບເວລາທີ່ພວກອິສຣາເອນ ກຳ-
ລັງອອກໄປສູ່ສະໜາມຮົບ ແລະມີສຽງດັງກຶກກ້ອງດັງຂຶ້ນ. [21]ທະຫານຂອງພວກຟີລິດສະຕິນ
ແລະພວກອິສຣາເອນກໍຕັ້ງທີ່ໝັ້ນຂອງໃຜລາວຢູ່ຕໍ່ໜ້າກັນເພື່ອຕຽມສູ້ຮົບ. [22]ດາວິດກໍປະອາຫານ
ໄວ້ກັບເຈົ້າໜ້າທີ່ຝ່າຍສະບຽງອາຫານ ແລະໄດ້ແລ່ນໄປຫາພວກອ້າຍຂອງລາວຢູ່ສະໜາມຮົບ
ເພື່ອຖາມຂ່າວຄາວວ່າພວກເຂົາຢູ່ຢ່າງໃດ. [23]ໃນຂະນະທີ່ພວກເຂົາກຳລັງສົນທະນາກັນຢູ່ ໂກລີ-
ອາດກໍເຂົ້າມາທ້າທາຍພວກອິສຣາເອນຕາມທີ່ລາວໄດ້ເຄີຍເຮັດມາຕັ້ງແຕ່ກ່ອນ ດາວິດກໍໄດ້ຍິນ
ຄຳທ້າທາຍຂອງລາວ. [24]ເມື່ອພວກອິສຣາເອນຫລຽວເຫັນໂກລີອາດ ພວກເຂົາກໍແລ່ນປົບໜີ
ດ້ວຍຄວາມຢ້ານກົວທີ່ສຸດ ພວກເຂົາເວົ້າກັນວ່າ,
[25]“ຈົ່ງຟັງມັນເວົ້າຫັ້ນດຸ ຖ້າໃຜຂ້າມັນໄດ້ ເຈົ້າຊີວິດຈະປະທານຊັບສົມບັດໃຫ້ຜູ້ນັ້ນ ແລະໃຫ້
ແຕ່ງງານກັບພະລາຊະທິດາຂອງພະອົງ ຄອບຄົວພໍ່ຂອງຜູ້ນັ້ນກໍຈະຖືກຍົກເວັ້ນຈາກການເສຍ

ສ່ວຍທຸກຢ່າງ."
26ດາວິດ ຈຶ່ງຖາມພວກທີ່ຢູ່ໃກ້ໆ ກັບລາວນັ້ນວ່າ, "ຜູ້ທີ່ຂ້າຄົນ ຟີລິດສະຕິນ ນີ້ໄດ້ ແລະຊ່ອຍ
ພວກ ອິສຣາເອນ ໃຫ້ພົ້ນຈາກການໝິ່ນປະໝາດນີ້ ຈະໄດ້ຫຍັງ? ຄົນປ່າເຖື່ອນຊາວ ຟີລິດສະຕິນ
ທີ່ເວົ້າທ້າທາຍກອງທັບຂອງ ພຣະຜູ້ເປັນເຈົ້າ ອົງມີຊີວິດຢູ່ນີ້ ແມ່ນໃຜ." 27ພວກເຂົາບອກລາວວ່າ
ຜູ້ໃດທີ່ຂ້າ ໂກລີອາດ ຕາຍ ຈະໄດ້ຮັບຕາມທີ່ໄດ້ເວົ້າມາແລ້ວນັ້ນ.
28ເອລີອາບ ອ້າຍກົກຂອງ ດາວິດ ໄດ້ຍິນລາວເວົ້າກັບທະຫານເຫລົ່ານັ້ນ ລາວກໍຮ້າຍ ດາວິດ
ແລະເວົ້າວ່າ, "ເຈົ້າກຳລັງເຮັດຫຍັງຢູ່ນີ້? ແມ່ນໃຜເບິ່ງແຍງແກະຂອງເຈົ້າຢູ່ໃນຖິ່ນແຫ້ງແລ້ງ
ກັນດານ? ມາເບິ່ງການສູ້ຮົບກັນເຮັດຫຍັງ? ເປັນຫຍັງເຈົ້າຈຶ່ງດື້ດຶງ ແລະທະເຍີທະຍານແທ້."
29ດາວິດ ຖາມອ້າຍຄືນວ່າ, "ຂ້ອຍໄດ້ເຮັດຫຍັງຜິດ? ພຽງແຕ່ຖາມເທົ່ານັ້ນບໍ່ແມ່ນບໍ?"
30ແລ້ວລາວກໍຫັນໄປຖາມຊາຍຄົນອື່ນແບບດຽວກັນ ແລະທຸກຄົນທີ່ລາວຖາມ ພວກເຂົາກໍຕອບ
ຢ່າງດຽວກັນໝົດ. 31ເມື່ອບາງຄົນໄດ້ຍິນຄຳຂອງ ດາວິດ ພວກເຂົາກໍນຳໄປທູນຕໍ່ຊາອູນ ແລະ
ພະອົງບອກໃຫ້ພວກເຂົານຳ ດາວິດ ເຂົ້າເຝົ້າ.
32ດາວິດ ໄດ້ທູນຕໍ່ຊາອູນ ວ່າ, "ຂ້າແດ່ພະອົງ ຂໍຢ່າໃຫ້ຜູ້ໃດຢ້ານຊາຍ ຟີລິດສະຕິນ ຄົນນີ້ເລີຍ
ຂ້ານ້ອຍຂານອາສາຈະອອກໄປຕໍ່ສູ້ກັບມັນເອງ." 33ຊາອູນ ຖາມວ່າ, "ບໍ່ໄດ້ດອກ ເຈົ້າຈະຕໍ່ສູ້ກັບ
ລາວໄດ້ຢ່າງໃດ? ເຈົ້າຍັງເປັນເດັກນ້ອຍຢູ່ ສ່ວນ ໂກລີອາດ ນັ້ນເປັນທະຫານມາແລ້ວ."
34ດາວິດ ທູນຕອບວ່າ, "ຂ້າແດ່ພະອົງ ຂ້ານ້ອຍກໍເຄີຍເບິ່ງແຍງຝູງແກະຂອງພໍ່ຂ້ານ້ອຍ.
35ບາງເທື່ອກໍມີສິງ ຫລືໝີມາຄຸບເອົາລູກແກະໄປ ຂ້ານ້ອຍໄດ້ໄລ່ຕິດຕາມໄປຕໍ່ສູ້ກັບມັນ ແລະໄດ້
ຊ່ອຍຊີວິດແກະນ້ອຍນັ້ນໄວ້ ແລະຖ້າວ່າ ສິງ ຫລືໝີກັບຄືນມາຫາຂ້ານ້ອຍ ຂ້ານ້ອຍກໍຈັບຄໍມັນ
ແລະຕີມັນຈົນຕາຍ. 36ຂ້ານ້ອຍໄດ້ຂ້າສິງ ແລະໝີມາແລ້ວ ຂ້ານ້ອຍຈະເຮັດກັບຊາຍ ຟີລິດສະ-
ຕິນ ຄົນນີ້ຢ່າງດຽວກັນ ເພາະວ່າລາວ ໄດ້ໝິ່ນປະໝາດກອງທັບຂອງ ພຣະເຈົ້າ ອົງ ມີຊີວິດຢູ່.
37ພຣະຜູ້ເປັນເຈົ້າ ໄດ້ຊົງຊ່ອຍຂ້ານ້ອຍໃຫ້ພົ້ນຈາກສິງ ແລະໝີ ພຣະອົງກໍຊົງຊ່ອຍຂ້ານ້ອຍໃຫ້
ພົ້ນຈາກຊາຍ ຟີລິດສະຕິນ ຄົນນີ້ໄດ້." ຊາອູນ ຕອບວ່າ, "ດີແລ້ວ ຈົ່ງໄປສາ ພຣະຜູ້ເປັນເຈົ້າ ຊົງ
ສະຖິດຢູ່ກັບເຈົ້າ."
38ຊາອູນ ກໍເອົາເຄື່ອງຮົບຂອງພະອົງເອງໃຫ້ ດາວິດ ໃສ່ ພະອົງໄດ້ເອົາໝວກທອງສຳລິດໃສ່
ໃຫ້ ດາວິດ ແລະເອົາເສື້ອຮົບໃຫ້ລາວນຸ່ງ. 39ດາວິດ ໄດ້ເອົາດາບຂອງ ຊາອູນ ຂັດໃສ່ສາຍແອວ
ແລະລອງຍ່າງເບິ່ງ ແຕ່ຍ່າງໄປບໍ່ໄດ້ ເພາະວ່າ ບໍ່ເຄີຍໃຊ້ເຄື່ອງເຫລົ່ານີ້ຈັກເທື່ອ ດາວິດ ຈຶ່ງທູນ
ຕໍ່ຊາອູນ ວ່າ, "ຂ້ານ້ອຍໄປສູ້ຮົບກັບເຄື່ອງແບບນີ້ບໍ່ໄດ້ດອກ ຂ້ານ້ອຍບໍ່ເຄີຍໃສ່ມັນ" ດັ່ງນັ້ນ ດາ-
ວິດ ຈຶ່ງແກ້ມັນອອກໝົດ. 40ລາວຈັບເອົາໄມ້ຄ້ອນສຳລັບຖືລ້ຽງແກະຂອງລາວ ແລ້ວເກັບເອົາຫີນ
ແຫ່ຫ້າກ້ອນໃນແຄມຫ້ວຍໃສ່ຖົງ ແລ້ວຖືກະຖຸນຕຽມຕົວອອກໄປສູ້ຮົບກັບ ໂກລີອາດ.

## ດາວິດຊະນະໂກລີອາດ

41ຊາຍ ຟີລິດສະຕິນ ກໍຍ່າງມຸ່ງໜ້າມາຫາ ດາວິດ ພ້ອມທັງຖືແຜ່ນ ເຫລັກຕ້ານທານຍ່າງອອກ
ນຳໜ້າລາວ. 42ລາວຍ່າງເຂົ້າມາໃກ້ໆ ເມື່ອໄດ້ເບິ່ງດາວິດຄັກໆ ແລ້ວ ລາວກໍຄິດດູຖູກໃນໃຈ
ເພາະວ່າ ດາວິດ ຍັງເປັນເດັກນ້ອຍທີ່ງາມ ແລະໜ້າຮັກ. 43ລາວເວົ້າຕໍ່ ດາວິດ ວ່າ, "ເຮີຍ! ໄມ້-

ຄ້ອນນັ້ນສຳລັບໄວ້ເຮັດຫຍັງ? ມຶງຄິດວ່າກູເປັນໝາຊັ້ນບໍ?" ແລ້ວລາວກໍເອີ້ນດ່າສາບແຊ່ງ ດາ-
ວິດ ໃນນາມພະຂອງລາວ. [44]ລາວເວົ້າທ້າທາຍ ດາວິດ ວ່າ, "ມານີ້ ກູຈະເອົາຊາກສົບຂອງມຶງໃຫ້
ນົກ ແລະສັດກິນ."

[45]ດາວິດ ເວົ້າຕອບວ່າ, "ເຈົ້າມາຕໍ່ສູ້ກັບຂ້ອຍດ້ວຍດາບ ຫອກ ແລະຫລາວ ແຕ່ວ່າ ຂ້ອຍມາ
ຕໍ່ສູ້ເຈົ້າໃນນາມຂອງ ພຣະຜູ້ເປັນເຈົ້າ ແຫ່ງຈັກກະວານ ຊຶ່ງເປັນ ພຣະເຈົ້າ ຂອງກອງທັບ ອິສຣາ-
ເອນ ທີ່ເຈົ້າໄດ້ເວົ້າທ້າທາຍນັ້ນ. [46]ໃນມື້ນີ້ ພຣະຜູ້ເປັນເຈົ້າ ຈະຊົງມອບເຈົ້າໄວ້ໃນອຳນາດຂອງ
ຂ້ອຍ ເຈົ້າຈະພ່າຍແພ້ຂ້ອຍ ແລະຂ້ອຍຈະຕັດຫົວເຈົ້າອອກ ສ່ວນສົບຂອງທະຫານ ຟີລິດສະຕີນ
ຂ້ອຍຈະເອົາໃຫ້ນົກ ແລະສັດກິນ ແລ້ວທົ່ວທັງໂລກຈະຮູ້ຈັກວ່າ ອິສຣາເອນ ມີ ພຣະເຈົ້າ.
[47]ທຸກໆ ຄົນທີ່ຢູ່ໃນທີ່ນີ້ ຈະເຫັນວ່າພຣະອົງບໍ່ຊົງຕ້ອງການດາບ ຫລືຫອກເພື່ອຊ່ວຍໃຫ້ໄພ່ພົນ
ຂອງພຣະອົງພົ້ນໄພ ພຣະອົງຊົງເປັນຜູ້ຊະນະໃນສະໜາມຮົບ ແລະພຣະອົງຈະຊົງມອບພວກ
ເຈົ້າທຸກຄົນໄວ້ໃນອຳນາດຂອງພວກຂ້ອຍ."

[48]ສ່ວນ ໂກລີອາດ ກໍຍ່າງມຸ່ງໜ້າເຂົ້າມາຫາ ດາວິດ ອີກ ດາວິດກໍແລ່ນເຂົ້າໄປໃນສະໜາມຮົບ
ຂອງຊາວ ຟີລິດສະຕີນ ເພື່ອຕໍ່ສູ້ກັບລາວຢ່າງວ່ອງໄວ. [49]ດາວິດ ຈົກເອົາຫີນໃນຖົງອອກມາ
ແລ້ວຍິງໃສ່ ໂກລີອາດ ກ້ອນຫີນນັ້ນໄດ້ຖືກໜ້າຜາກຂອງລາວ ເຮັດໃຫ້ກະໂຫລກຫົວຂອງລາວ
ແຕກລົ້ມຂວ້ຳໜ້າລົງດິນ.

[50]ດາວິດ ໄດ້ຊະນະ ແລະຂ້າ ໂກລີອາດ ດ້ວຍກະຖຸນ ແລະກ້ອນຫີນພຽງກ້ອນດຽວໂດຍບໍ່ໄດ້
ໃຊ້ດາບ. [51]ແລ້ວ ດາວິດ ກໍແລ່ນເຂົ້າໄປຢືນຢູ່ເທິງ ໂຕລາວ ຖອດເອົາດາບຂອງ ໂກລີອາດ ອອກ
ມາຟັນ ແລະຕັດຫົວລາວ. ເມື່ອພວກ ຟີລິດສະຕີນ ເຫັນຜູ້ເກັ່ງກ້າຂອງຕົນຕາຍ ພວກເຂົາກໍພາ-
ກັນແລ່ນປົບໜີ.

[52]ຝ່າຍທະຫານ ອິສຣາເອນ ແລະທະຫານ ຢູດາ ກໍຮ້ອງໂຫ່ແລ່ນໄລ່ຕິດຕາມພວກເຂົາໄປ ຈົນ
ຮອດເມືອງ ກັດ ແລະຮອດປະຕູເມືອງ ເອັກໂຣນ ພວກ ຟີລິດສະຕີນ ທີ່ບາດເຈັບ ໄດ້ລົ້ມຕາຍ
ຕາມຫົນທາງ ຊະອາຣາຢິມ ທີ່ໄປເຖິງ ເມືອງ ກັດ ແລະເມືອງ ເອັກໂຣນ. [53]ເມື່ອພວກ ອິສຣາເອນ
ກັບຄືນມາຈາກການໄລ່ຕິດຕາມຊາວ ຟີລິດສະຕີນ ພວກເຂົາກໍມາຍຶດເອົາເຄື່ອງຂອງໃນຄ້າຍພັກ
ຂອງ ຟີລິດສະຕີນ ໄປ. [54]ສ່ວນ ດາວິດ ກໍຖືເອົາຫົວ ໂກລີອາດ ໄປນະຄອນ ເຢຣູຊາເລັມ. ແຕ່ວ່າ
ອາວຸດຂອງ ໂກລີອາດ ລາວໄດ້ເອົາໄວ້ໃນຕູບຜ້າເຕັນຂອງລາວເອງ.

## ດາວິດສະເໜີຕົວຕໍ່ຊາອູນ

[55]ເມື່ອ ຊາອູນ ເຫັນ ດາວິດ ອອກໄປສູ້ ໂກລີອາດ ພະອົງຈຶ່ງຖາມ ອັບເນ ຜູ້ບັນຊາການທະຫານ
ຂອງພະອົງວ່າ, "ອັບເນ ເດັກນ້ອຍຄົນນີ້ແມ່ນໃຜ?" ອັບເນ ທູນຕອບວ່າ, "ຂ້າແດ່ພະອົງ ຂ້າ-
ນ້ອຍບໍ່ຮູ້ຈັກ."

[56]ຊາອູນ ຈຶ່ງເວົ້າວ່າ, "ອອກໄປເບິ່ງດູ." [57]ດັ່ງນັ້ນ ເມື່ອ ດາວິດ ກັບມາຄ້າຍພັກ ຫລັງຈາກໄດ້
ຂ້າ ໂກລີອາດ ແລ້ວ ອັບເນ ກໍນຳລາວໄປເຝົ້າ ຊາອູນ ແລະ ດາວິດ ໄດ້ຖືຫົວຂອງ ໂກລີອາດ ໄປ
ນຳ. [58]ຊາອູນ ຖາມລາວວ່າ, "ລູກເອີຍ ເຈົ້າເປັນລູກໃຜ?" ດາວິດ ທູນຕອບວ່າ, "ຂ້ານ້ອຍເປັນ
ລູກຊາຍຂອງ ເຢຊີ ຂ້າໃຊ້ຂອງພະອົງທີ່ເມືອງ ເບັດເລເຮັມ."

# ບົດທີ 18

[1]ເມື່ອຊາອູນ ແລະດາວິດໄດ້ສົນທະນາປາໄສກັນແລ້ວ ໂຢນາທານລູກຊາຍຂອງຊາອູນ ກໍ
ເກີດມີຄວາມນິຍົມຊົມຊອບດາວິດຫລາຍ ແລະມີຄວາມຮັກແພງລາວຫລາຍ. [2]ຕັ້ງແຕ່ມື້ນັ້ນມາ
ຊາອູນກໍເອົາດາວິດໄປຢູ່ນຳ ແລະບໍ່ໄດ້ໃຫ້ກັບຄືນເມືອບ້ານເລີຍ. [3]ຍ້ອນໂຢນາທານຮັກແພງ
ດາວິດຫລາຍລາວຈຶ່ງສາບານເປັນເພື່ອນທີ່ດີກັບດາວິດຕະຫລອດໄປ. [4]ໂຢນາທານໄດ້ແກ້ເສື້ອ
ຊັ້ນນອກຂອງຕົນເອງໃຫ້ດາວິດພ້ອມທັງເຄື່ອງຮົບ ດາບ ຄັນທະນູ ແລະສາຍຮັດ.
[5]ຍ້ອນດາວິດໄດ້ເຮັດຫລ້ອນໜ້າທີ່ທຸກຢ່າງທີ່ຊາອູນໄດ້ສັ່ງລາວອອກໄປປະຕິບັດນັ້ນ ຊາອູນ
ຈຶ່ງແຕ່ງຕັ້ງໃຫ້ລາວເປັນນາຍທະຫານໃນກອງທັບຂອງພະອົງ ນາຍແລະພົນທະຫານຂອງຊາ-
ອູນກໍເຫັນດີນຳ.

## ຊາອູນຄິດອິດສາດາວິດ

[6]ເມື່ອພວກທະຫານກັບຄືນມາ ແລະຫລັງຈາກດາວິດກັບມາແຕ່ຂ້າໂກລີອາດແລ້ວ ພວກຜູ້-
ຍິງຈາກຫລາຍຫົວເມືອງໃນອິສຣາເອນ ກໍພາກັນເຂົ້າເຝົ້າເຈົ້າຊີວິດຊາອູນ ພວກເຂົາພາກັນ
ຮ້ອງເພງຢ່າງມ່ວນຊື່ນ ພ້ອມທັງຟ້ອນ ຕີກອງ ແລະດີດພິນ. [7]ໃນໂອກາດສະເຫລີມສະຫລອງ
ຄັ້ງນີ້ ພວກຜູ້ຍິງໄດ້ຮ້ອງເພງວ່າ, “ຊາອູນໄດ້ຂ້າຫລາຍພັນຄົນ ແຕ່ດາວິດໄດ້ຂ້າຫລາຍໝື່ນ
ຄົນ”
[8]ສ່ວນຊາອູນກໍບໍ່ພໍໃຈທີ່ໄດ້ຍິນດັ່ງນີ້ ພະອົງຈຶ່ງຊົງພິໂລດ ແລະເວົ້າວ່າ, “ເຮົາເສຍໃຈຫລາຍ
ທີ່ມີຄົນເວົ້າວ່າ ດາວິດໄດ້ຂ້າຫລາຍໝື່ນຄົນ ແຕ່ເຮົາໄດ້ຂ້າຫລາຍພັນຄົນເທົ່ານັ້ນ ດາວິດເຫລືອ
ພຽງສິ່ງດຽວຄືຍັງບໍ່ທັນໄດ້ເປັນກະສັດເທົ່ານັ້ນ.” [9]ນັບແຕ່ມື້ນັ້ນມາ ຊາອູນກໍອິດສາດາວິດ.
[10]ມື້ຕໍ່ມາ ວິນຍານຊົ່ວທີ່ພຣະຜູ້ເປັນເຈົ້າສົ່ງມາກໍເຂົ້າສິງຊາອູນ ຢູ່ໃນພະລາຊະວັງ ເພິ່ນໄດ້
ເວົ້າລະເມີຄືຄົນເປັນບ້າ ສ່ວນດາວິດກໍດີດພິນດັ່ງທີ່ເຄີຍໄດ້ປະຕິບັດມາທຸກມື້. [11]ເວລານັ້ນ ຊາ-
ອູນຖືຫອກຢູ່ ຊາອູນເວົ້າກັບຕົວເອງວ່າ, “ກູຈະແທງມັນໃຫ້ຕາຍຕິດກັບຝາ” ແລ້ວພະອົງກໍຊັດ
ຫອກໃສ່ດາວິດສອງເທື່ອ ແຕ່ດາວິດຫລົບຫລີກທັນທຸກເທື່ອ.
[12]ຊາອູນເອງກໍຢ້ານດາວິດ ເພາະພຣະຜູ້ເປັນເຈົ້າຊົງສະຖິດຢູ່ກັບລາວ ແຕ່ບໍ່ໄດ້ຊົງສະຖິດຢູ່
ກັບພະອົງ. [13]ຊາອູນໄດ້ສົ່ງດາວິດໜີໂດຍແຕ່ງຕັ້ງໃຫ້ລາວເປັນຜູ້ບັງຄັບບັນຊາທະຫານພັນຄົນ
ດາວິດໄດ້ນຳໜ້າທະຫານຂອງລາວອອກສູ່ສະໜາມຮົບ. [14]ລາວໄດ້ເຮັດຫລ້ອນໜ້າທີ່ທຸກຢ່າງ ກໍ
ເພາະວ່າພຣະຜູ້ເປັນເຈົ້າຊົງສະຖິດຢູ່ກັບລາວ. [15]ຊາອູນໄດ້ສັງເກດເຫັນວ່າ ດາວິດເຮັດວຽກ
ຫລ້ອນໜ້າທີ່ທຸກຢ່າງ ພະອົງຈຶ່ງເກີດມີຄວາມຢ້ານກົວລາວຫລາຍຂຶ້ນ. [16]ແຕ່ວ່າ ທຸກໆ ຄົນໃນ
ອິສຣາເອນ ແລະຢູດາຮັກດາວິດ ເພາະວ່າລາວເປັນຜູ້ນຳທີ່ມີຄວາມສາມາດ ແລະເຮັດວຽກ
ຫລ້ອນໜ້າທີ່ທຸກຢ່າງ.

## ດາວິດແຕ່ງງານກັບພະລາຊະທິດາຂອງຊາອູນ

[17]ຕໍ່ມາຊາອູນໄດ້ເວົ້າຕໍ່ດາວິດວ່າ, “ນີ້ເດ ເມຣັບລູກສາວກົກຂອງເຮົາ ເຮົາຈະໃຫ້ເຈົ້າແຕ່ງ-
ງານກັບນາງ ແຕ່ເຈົ້າຕ້ອງຮັບໃຊ້ເຮົາຢ່າງທະຫານທີ່ເກັ່ງກ້າ ແລະສັດຊື່ໃນການສູ້ຮົບ ເພື່ອ
ພຣະຜູ້ເປັນເຈົ້າ” ຊາອູນຄິດວ່າ ດ້ວຍວິທີນີ້ ພະອົງຈຶ່ງຈະບໍ່ເປັນຜູ້ຂ້າດາວິດດ້ວຍຕົນເອງ ແຕ່

ຈະຕ້ອງແມ່ນພວກ ຟີລິດສະຕິນ ເປັນຜູ້ຂ້າ.
[18]ດາວິດ ທູນຕອບວ່າ, “ຂ້ານ້ອຍ ແລະຄອບຄົວພໍ່ຂອງຂ້ານ້ອຍບໍ່ມີຄວາມສຳຄັນຫຍັງພໍທີ່ຈະ
ກາຍມາເປັນລູກເຂີຍຂອງພະອົງ.” [19]ຕໍ່ມາ ເມື່ອເຖິງເວລາທີ່ຈະຍົກ ເມຣັບ ໃຫ້ ດາວິດ ພະອົງກໍ
ຊົງປ່ຽນພະໄທເສຍໂດຍໄດ້ຍົກ ເມຣັບ ໃຫ້ຊາຍຄົນໜຶ່ງຊື່ວ່າ ອັດຣີເອນ ຊາວບ້ານ ເມໂຮລາດ.
[20]ແຕ່ວ່າ ນາງ ມີການ ລູກສາວອີກຄົນໜຶ່ງຂອງ ຊາອູນ ເກີດມີຄວາມຮັກຕໍ່ ດາວິດ ເມື່ອ ຊາອູນ
ຮູ້ເລື່ອງກໍດີໃຈ. [21]ພະອົງຈຶ່ງ ເວົ້າກັບຕົນເອງວ່າ, “ເຮົາຈະຕ້ອງຍົກມີການນີ້ໃຫ້ ດາວິດ ເພື່ອຈະ
ໄດ້ຫລອກລວງ ໃຫ້ພວກ ຟີລິດສະຕິນ ຂ້າລາວ” ດັ່ງນັ້ນ ຊາອູນ ຈຶ່ງ ເວົ້າກັບ ດາວິດ ເປັນ ເທື່ອທີ
ສອງວ່າ “ເຈົ້າຕ້ອງເປັນລູກເຂີຍຂອງເຮົາ.”
[22]ພະອົງ ໄດ້ສັ່ງ ໃຫ້ນາຍທະຫານຂອງພະອົງບອກກັບ ດາວິດ ເປັນການສ່ວນຕົວວ່າ, “ເຈົ້າຊີ-
ວິດຊົງພໍພະໄທໃນຕົວເຈົ້າ ແລະນາຍທະຫານທຸກຄົນກໍນິຍົມຊົມຊອບເຈົ້າ ດຽວນີ້ ເປັນໂອກາດ
ດີສຳລັບເຈົ້າ ເຈົ້າຈະຕ້ອງ ແຕ່ງງານກັບພະລາຊະທິດາຂອງພະອົງ.” [23]ດັ່ງນັ້ນ ພວກນາຍທະ-
ຫານຈຶ່ງ ເວົ້າກັບ ດາວິດ ແລະລາວຕອບວ່າ, “ມັນເປັນກຽດອັນສູງສົ່ງສຳລັບຄົນທຸກຄົນຍາກ ທີ່ບໍ່
ມີຄວາມສຳຄັນຫຍັງ ຊຶ່ງຈະຕ້ອງກາຍເປັນລູກເຂີຍຂອງເຈົ້າຊີວິດ.”
[24-25]ແລ້ວນາຍທະຫານ ໄດ້ເລົ່າຄຳທີ່ ດາວິດ ເວົ້ານັ້ນ ໃຫ້ຊາອູນ ຟັງ ຊາອູນ ຈຶ່ງອອກຄຳສັ່ງໃຫ້
ພວກ ເຂົາ ໄປບອກ ດາວິດ ວ່າ, “ເຈົ້າຊີວິດບໍ່ຕ້ອງການຄ່າສິນດອງຫຍັງໝົດ ຈາກ ເຈົ້າ ພະອົງ
ຕ້ອງການ ແຕ່ໜັງຫຸ້ມປາຍອະໄວຍະວະລັບຂອງຄົນ ຟີລິດສະຕິນ ຮ້ອຍຄົນ ເພື່ອ ເປັນການ ແກ້-
ແຄ້ນສັດຕູຂອງພະອົງເທົ່ານັ້ນ” ນີ້ຄືແຜນການທີ່ຊາອູນ ຢາກໃຫ້ພວກ ຟີລິດສະຕິນ ຂ້າ ດາວິດ.
[26]ຝ່າຍທະຫານຂອງ ຊາອູນ ກໍລາຍງານຕໍ່ ດາວິດ ຕາມທີ່ ຊາອູນ ໄດ້ເວົ້າ ແລະ ດາວິດ ມີຄວາມ
ປິຕິຍິນດີທີ່ມີຊ່ອງທາງຈະ ໄດ້ເປັນລູກເຂີຍ ເຈົ້າຊີວິດ ກ່ອນມື້ແຕ່ງງານ. [27]ດາວິດ ແລະທະຫານ
ຂອງລາວກໍຂ້າພວກ ຟີລິດສະຕິນ ຕາຍສອງຮ້ອຍຄົນ ລາວໄດ້ເອົາໜັງຫຸ້ມປາຍອະໄວຍະວະລັບ
ຂອງພວກເຂົາໃຫ້ແກ່ເຈົ້າຊີວິດ ແລະເອົາອອກມານັບໃຫ້ຊາອູນ ເບິ່ງຈົນໝົດ ເພື່ອວ່າລາວຈະໄດ້
ກາຍເປັນລູກເຂີຍຂອງພະອົງ ດັ່ງນັ້ນ ຊາອູນ ຈຶ່ງມອບນາງ ມີການ ພະລາຊະທິດາຂອງພະອົງ
ໃຫ້ແຕ່ງງານກັບ ດາວິດ.
[28]ເມື່ອ ຊາອູນ ໄດ້ເຫັນຢ່າງຄັກແນ່ແລ້ວວ່າ ພຣະຜູ້ເປັນເຈົ້າ ຊົງສະຖິດຢູ່ກັບ ດາວິດ ແລະ ມີ-
ການ ພະລາຊະທິດາຂອງພະອົງກໍຮັກລາວ. [29]ດັ່ງນັ້ນ ພະອົງຈຶ່ງຢ້ານ ດາວິດ ຫລາຍຂຶ້ນ ແລະ
ຕັ້ງຕົວ ເປັນສັດຕູຂອງລາວ ຈົນຕະຫລອດຊີວິດຂອງພະອົງ. [30]ແຕ່ລະ ເທື່ອທີ່ກອງທັບຂອງພວກ
ຟີລິດສະຕິນ ມາຕໍ່ສູ້ ດາວິດ ກໍຕີຊະນະຫລາຍກວ່ານາຍທະຫານຄົນອື່ນໆ ຂອງ ຊາອູນ ດັ່ງນັ້ນ
ດາວິດ ຈຶ່ງມີຊື່ສຽງ ໂດ່ງດັງຫລາຍ.

# ບົດທີ 19

## ຊາອູນຕິດຕາມຮົບກວນດາວິດ

[1]ຊາອູນ ໄດ້ບອກ ໂຢນາທານ ລູກຊາຍຂອງພະອົງ ແລະພວກຂ້າລາຊະການ ເຖິງ ແຜນການຂ້າ
ດາວິດ. [2]ແຕ່ ໂຢນາທານ ຮັກ ດາວິດ ຫລາຍ ລາວຈຶ່ງມາບອກ ດາວິດ ວ່າ, “ພໍ່ຂ້ອຍພະຍາຍາມຈະ

ຂ້າເຈົ້າຢູ່ ໃນມື້ອື່ນເຊົ້າຈົ່ງລະວັງຕົວໃຫ້ດີ. 3ໃຫ້ເຈົ້າໄປລີ້ຕົວຢູ່ໃນບ່ອນເລິກລັບ ສ່ວນຂ້ອຍຈະ
ໄປຢືນຄຽງຂ້າງພໍ່ຂອງຂ້ອຍໃນທົ່ງນາບ່ອນທີ່ລີ້ຕົວຢູ່ນັ້ນ ຂ້ອຍຈະທູນເລື່ອງຂອງເຈົ້າຕໍ່ພໍ່ຂອງ
ຂ້ອຍ ຖ້າວ່າ ຂ້ອຍຮູ້ເລື່ອງໃດແລ້ວ ຂ້ອຍຈະມາບອກໃຫ້ເຈົ້າຮູ້ຈັກໂລດ.”

4ໂຢນາທານ ໄດ້ກ່າວສັນລະເສີນ ດາວິດ ຕໍ່ ຊາອູນ ວ່າ, “ພໍ່ຂ້ານ້ອຍ ຂໍຢ່າທຳຮ້າຍ ດາວິດ ຂ້າ
ໃຊ້ຂອງພໍ່ເລີຍ ລາວບໍ່ໄດ້ເຄີຍເຮັດສິ່ງໃດຜິດຈັກເທື່ອ ແຕ່ກົງກັນຂ້າມ ທຸກສິ່ງທີ່ລາວເຮັດນັ້ນ
ເປັນຜົນດີອັນຍິ່ງໃຫຍ່ແກ່ພໍ່. 5ລາວໄດ້ສ່ຽງຊີວິດຕົນເອງຂ້າ ໂກລີອາດ ແລະ ພຣະຜູ້ເປັນເຈົ້າກໍ
ຊົງນຳເອົາໄຊຊະນະອັນຍິ່ງໃຫຍ່ມາໃຫ້ພວກອິສຣາເອນ ພໍ່ໄດ້ເຫັນການນີ້ ແລະພໍ່ກໍດີໃຈ ແລ້ວ
ເປັນຫຍັງພໍ່ຈຶ່ງເຮັດຜິດຕໍ່ຜູ້ທີ່ບໍ່ມີຄວາມຜິດໂດຍຢາກຂ້າລາວ ແບບບໍ່ມີເຫດຜົນຫຍັງໝົດ?”

6ເມື່ອຊາອູນ ໄດ້ຍິນ ໂຢນາທານ ເວົ້າ ເພິ່ນກໍສາບານໃນນາມພຣະຜູ້ເປັນເຈົ້າວ່າ ດາວິດຈະບໍ່
ຖືກຂ້າ. 7ໂຢນາທານ ຈຶ່ງເອີ້ນ ດາວິດ ມາ ແລະບອກທຸກສິ່ງແກ່ລາວ ແລ້ວກໍນຳ ດາວິດ ເຂົ້າເຝົ້າ
ຊາອູນ ແລ້ວ ດາວິດ ກໍຢູ່ຮັບໃຊ້ຊາອູນ ຄືດັ່ງແຕ່ກ່ອນ.

8ຕໍ່ມາ ສົງຄາມກັບພວກ ຟີລິດສະຕິນ ໄດ້ລະເບີດຂຶ້ນ ດາວິດ ໄດ້ຕໍ່ສູ້ກັບພວກສັດຕູຈົນພວກ
ເຂົາພ່າຍແພ້ ແລະແຕກໜີໄປ. 9ຕໍ່ມາ ວິນຍານຊົ່ວທີ່ ພຣະຜູ້ເປັນເຈົ້າ ສົ່ງມາໄດ້ເຂົ້າສິງ ຊາອູນ
ອີກ ເມື່ອຊາອູນ ກຳລັງນັ່ງຢູ່ໃນພະລາຊະວັງພ້ອມທັງຖືຫອກຢູ່ໃນມື ສ່ວນ ດາວິດ ກໍນັ່ງດີດພິນຢູ່
ທີ່ນັ້ນ. 10ຊາອູນ ພະຍາຍາມ ເອົາຫອກ ແທງ ດາວິດ ເຂົ້າຕິດກັບຝາ ແຕ່ ດາວິດ ຫລົບຫລີກທັນ
ຫອກຈຶ່ງເຂົ້າສຽບຝາ ແລ້ວ ດາວິດ ກໍແລ່ນປົບໜີເອົາຕົວລອດ.

11ໃນຕອນກາງຄືນຂອງມື້ດຽວກັນນັ້ນ ຊາອູນ ໄດ້ສົ່ງທະຫານຂອງພະອົງບາງຄົນ ໄປຈອບ
ນອກເຮືອນຂອງ ດາວິດ ເພື່ອຂ້າລາວໃນມື້ອື່ນເຊົ້າ ນາງ ມີການ ເມຍຂອງ ດາວິດ ຈຶ່ງເຕືອນວ່າ,
“ຖ້າເຈົ້າບໍ່ໜີໄປໃນຕອນກາງຄືນນີ້ ມື້ອື່ນເຊົ້າຈະຕ້ອງຖືກຂ້າ.” 12ນາງໄດ້ຢ່ອນ ດາວິດ ລົງທາງ
ປ່ອງຢ້ຽມ ແລະລາວກໍແລ່ນໜີເອົາຕົວລອດໄປ.

13ແລ້ວນາງ ໄດ້ ເອົາຮູບ ເຄົາລົບປະຈຳ ເຮືອນວາງລົງ ໄວ້ ເທິງຕຽງ ເອົາໝອນທີ່ເຮັດດ້ວຍຂົນ
ແກະໝູນ ເທິງຫົວ ແລ້ວ ເອົາຜ້າຫົ່ມປົກມັນໄວ້. 14ເມື່ອທະຫານຂອງ ຊາອູນ ເຂົ້າໄປຈັບ ດາວິດ
ມີການຈຶ່ງບອກພວກເຂົາວ່າ ດາວິດ ເປັນໄຂ້.

15ແຕ່ຊາອູນ ບອກພວກເຂົາກັບຄືນໄປຫາ ດາວິດ ອີກພ້ອມທັງສັ່ງວ່າ, “ຈົ່ງຫາມ ດາວິດ ໃສ່ຕຽງ
ມານີ້ ຂ້ອຍຈະຂ້າລາວ.” 16ພວກເຂົາຈຶ່ງເຂົ້າໄປໃນເຮືອນ ແລະໄດ້ພົບຮູບໂຄລົບປະຈຳເຮືອນຢູ່
ເທິງຕຽງ ແລະມີໝອນທີ່ເຮັດດ້ວຍຂົນແກະໝູນຫົວມັນຢູ່.

17ຊາອູນ ຖາມ ມີການ ວ່າ, “ເປັນຫຍັງລູກຈຶ່ງຫລອກລວງພໍ່ຢ່າງນີ້ ແລະປ່ອຍໃຫ້ສັດຕູຂອງພໍ່
ໜີໄປ?” ນາງຕອບວ່າ, “ລາວເວົ້າວ່າ ຖ້າລູກບໍ່ຊ່ອຍເຫລືອລາວໃຫ້ໜີໄປ ລາວຈະຂ້າລູກ.”

18ດາວິດ ໄດ້ໜີໄປຫາ ຊາມູເອນ ທີ່ ເມືອງ ຣາມາ ແລະ ໄດ້ບອກທຸກສິ່ງທີ່ ຊາອູນ ໄດ້ເຮັດກັບ
ລາວໃຫ້ເພິ່ນຟັງ ແລ້ວ ຊາມູເອນ ກັບ ດາວິດ ກໍພາກັນໄປພັກຢູ່ບ້ານ ນາໂຢດ. 19ຕໍ່ມາກໍມີຄົນມາ
ບອກຊາອູນວ່າ ດາວິດຢູ່ທີ່ບ້ານ ນາໂຢດ ໃນເມືອງ ຣາມາ. 20ຊາອູນ ຈຶ່ງສົ່ງຄົນອອກໄປຈັບລາວ
ເມື່ອໄປຮອດ ພວກເຂົາໄດ້ເຫັນກຸ່ມຜູ້ປະກາດພຣະທຳກຳລັງທຳນວາຍຢູ່ ຊຶ່ງມີຊາມູເອນ ເປັນ
ຜູ້ນຳໜ້າ ພຣະວິນຍານ ຂອງ ພຣະເຈົ້າ ກໍ ເຂົ້າຢູ່ໃນທະຫານຂອງ ຊາອູນ ແລ້ວພວກເຂົາກໍທຳ-

ນວາຍຄືກັນ. 21ເມື່ອຊາອູນໄດ້ຍິນຂ່າວດັ່ງນັ້ນ ພະອົງກໍສົ່ງຜູ້ນຳຂ່າວອອກໄປຕື່ມອີກ ພວກເຂົາ
ເຫລົ່ານັ້ນກໍເຂົ້າຮ່ວມທຳນວາຍຄືກັນ ພະອົງໄດ້ສົ່ງຜູ້ນຳຂ່າວອອກໄປອີກເປັນເທື່ອທີສາມ ແລະ
ເຫດການກໍເກີດຂຶ້ນກັບພວກເຂົາຄືເກົ່າ. 22ແລ້ວພະອົງຈຶ່ງອອກໄປເມືອງຣາມາ ເມື່ອໄປຮອດ
ນໍ້າສ້າງໃຫຍ່ທີ່ເສກູ ພະອົງກໍຖາມຫາຊາມູເອນກັບດາວິດ ແລະພະອົງໄດ້ຄຳຕອບວ່າ ພວກ
ເຂົາຢູ່ທີ່ບ້ານນາໂຢດ.

23ໃນຂະນະທີ່ພຣະອົງກຳລັງເດີນທາງໄປທີ່ນັ້ນ ພຣະວິນຍານຂອງພຣະເຈົ້າໄດ້ເຂົ້າຢູ່ກັບພະ
ອົງຄືກັນ ພະອົງໄດ້ທຳນວາຍໄປສຸດທາງຈົນໄປຮອດເມືອງນາໂຢດ. 24ພະອົງແກ້ເຄື່ອງນຸ່ງອອກ
ແລະທຳນວາຍຕໍ່ໜ້າຊາມູເອນ ແລ້ວນອນເປືອຍກາຍຢູ່ຕະຫລອດມື້ຕະຫລອດຄືນ ມີຄຳຊ່າລື
ວ່າຊາອູນໄດ້ກາຍເປັນຜູ້ປະກາດພຣະທຳໄປແລ້ວ.”

# ບົດທີ 20

## ໂຢນາທານຊ່ອຍເຫລືອດາວິດ

1ຕໍ່ມາ ດາວິດໄດ້ໜີຈາກບ້ານນາໂຢດ ເມືອງຣາມາໄປຫາໂຢນາທານ ແລະເວົ້າກັບລາວ
ວ່າ, “ເປັນຫຍັງ ພໍ່ຂອງເຈົ້າຈຶ່ງຢາກຂ້າຂ້ອຍ? ຂ້ອຍໄດ້ເຮັດຜິດຫຍັງຕໍ່ພະອົງ?”

2ໂຢນາທານຈຶ່ງຕອບວ່າ, “ບໍ່ດອກ ພໍ່ຂອງຂ້ອຍຈະບໍ່ຂ້າເຈົ້າ ພໍ່ຂອງຂ້ອຍໄດ້ບອກໃຫ້ຂ້ອຍຮູ້
ທຸກໆ ສິ່ງທີ່ເພິ່ນຈະເຮັດ ຈະເປັນສິ່ງສຳຄັນ ຫລືບໍ່ກໍຕາມ ເພິ່ນບໍ່ໄດ້ປິດບັງຫຍັງຂ້ອຍເລີຍ.”

3ແຕ່ດາວິດຕອບວ່າ, “ພໍ່ຂອງເຈົ້າຮູ້ດີວ່າເຈົ້ານິຍົມຊົມຊອບຂ້ອຍຫລາຍ ພະອົງຈະບໍ່ບອກ
ເຖິງແຜນການທີ່ພະອົງຈະເຮັດໃຫ້ເຈົ້າຮູ້ນຳດອກ ເພື່ອຈະບໍ່ໃຫ້ເຈົ້າເສຍໃຈ ຂ້ອຍຂໍສາບານໃນ
ນາມພຣະຜູ້ເປັນເຈົ້າ ຜູ້ຊົງພຣະຊົນຢູ່ແລະຕໍ່ເຈົ້າວ່າ ຄວາມຕາຍຢູ່ໃກ້ຂ້ອຍທີ່ສຸດ.” 4ໂຢນາທານ
ຕອບວ່າ, “ຂ້ອຍຈະເຮັດທຸກສິ່ງທີ່ເຈົ້າຕ້ອງການ.”

5ດາວິດຕອບວ່າ, “ມື້ອື່ນເປັນມື້ສະຫລອງເດືອນອອກໃໝ່ ຂ້ອຍຈຳເປັນຈະຕ້ອງກິນເຂົ້າຮ່ວມ
ໂຕະກັບພໍ່ຂອງເຈົ້າ ແຕ່ວ່າ ຂໍໃຫ້ເຈົ້າອະນຸຍາດໃຫ້ຂ້ອຍໄປລີ້ຢູ່ໃນທົ່ງນາຈົນຮອດຄໍ່າຂອງມື້ຮື.
6ຖ້າພໍ່ຂອງເຈົ້າ ເຫັນວ່າຂ້ອຍບໍ່ຢູ່ຫັ້ນ ຂໍໃຫ້ເຈົ້າບອກພະອົງວ່າ ຂ້ອຍໄດ້ຂໍອະນຸຍາດນຳເຈົ້າເມືອ
ເຮືອນທີ່ເມືອງເບັດເລເຮັມ ເພາະວ່າເປັນຍາມທີ່ຄອບຄົວຂອງຂ້ອຍທັງໝົດຖວາຍເຄື່ອງບູຊາ
ປະຈຳປີ. 7ຖ້າພະອົງເວົ້າວ່າ, “ໄດ້ແລ້ວ ຂ້ອຍກໍຈະປອດໄພ ແຕ່ຖ້າພະອົງຮ້າຍ ເຈົ້າກໍຈະເຫັນ
ວ່າ ພະອົງຍັງຄິດອາຄາດບາດໝາງຂ້ອຍຢູ່. 8ຈົ່ງກະລຸນາເຮັດກັບຂ້ອຍດ້ວຍໄມຕີຈິດອັນດີເທີ້ນ
ແລະຈົ່ງຮັກສາຄຳໝັ້ນສັນຍາອັນສັກສິດທີ່ເຈົ້າໄດ້ມີຕໍ່ຂ້ອຍ ແຕ່ຖ້າຂ້ອຍເປັນຄົນຜິດ ເຈົ້າຈົ່ງຂ້າ
ຂ້ອຍເສຍ ບໍ່ຕ້ອງໃຫ້ພໍ່ຂອງເຈົ້າລົງມືດອກ.”

9ໂຢນາທານຕອບວ່າ, “ຢ່າຄິດເຖິງເລື່ອງຢ່າງນັ້ນ ຖ້າຂ້ອຍຮູ້ແນ່ວ່າ ພໍ່ຂອງຂ້ອຍຍັງບໍ່ສິ້ນ
ສຸດທີ່ຈະເຮັດອັນຕະລາຍຕໍ່ເຈົ້າ ຂ້ອຍຈະຕ້ອງບອກໃຫ້ເຈົ້າຮູ້ຈັກ.” 10ແລ້ວດາວິດຈຶ່ງຖາມຂຶ້ນ
ວ່າ, “ຖ້າພໍ່ຂອງເຈົ້າຮ້າຍ ໃຜຈະມາບອກຂ້ອຍ?”

11ໂຢນາທານຕອບວ່າ, “ໃຫ້ພວກເຮົາອອກໄປທີ່ທົ່ງນາເທາະ” ດັ່ງນັ້ນພວກເຂົາຈຶ່ງພາກັນ
ອອກໄປທີ່ທົ່ງນາ 12ໂຢນາທານໄດ້ເວົ້າກັບດາວິດວ່າ, “ຂໍໃຫ້ພຣະຜູ້ເປັນເຈົ້າຂອງພວກອິສຣາ-

ເອນ ຈົ່ງເປັນພະຍານແກ່ພວກເຮົາດ້ວຍ ມື້ອື່ນ ແລະມື້ຕໍ່ໄປໃນເວລາດຽວກັນນີ້ ຂ້ອຍຈະຖາມພໍ່
ຂອງຂ້ອຍ ຖ້າເພິ່ນເຈດຕະນາດີຕໍ່ເຈົ້າຂ້ອຍຈະສົ່ງຂ່າວມາຫາເຈົ້າ. [13]ຖ້າວ່າເພິ່ນມີເຈດຕະນາ
ຮ້າຍ ຂ້ອຍຈະບໍ່ສົ່ງຂ່າວມາຫາເຈົ້າ ແລ້ວໃຫ້ເຈົ້າໜີໄປ ຂໍໃຫ້ພຣະຜູ້ເປັນເຈົ້າຂ້ຽນຕີຂ້ອຍໃຫ້
ຕາຍ ຂໍໃຫ້ພຣະອົງຊົງສະຖິດຢູ່ກັບເຈົ້າດັ່ງທີ່ພຣະອົງໄດ້ຊົງສະຖິດຢູ່ກັບພໍ່ຂອງຂ້ອຍ. [14]ແລະ
ດຽວນີ້ ຖ້າຂ້ອຍຍັງມີຊີວິດຢູ່ ຂໍໃຫ້ເຈົ້າຮັກສາຄຳໝັ້ນສັນຍາອັນສັກສິດນີ້ໄວ້ ແລະໃຫ້ສັດຊື່ຕໍ່
ຂ້ອຍ. [15]ແຕ່ວ່າຖ້າຂ້ອຍຕາຍໄປ ຈົ່ງສະແດງຄວາມເມດຕາກະລຸນາຢ່າງດຽວກັນນີ້ ຕໍ່ຄອບຄົວ
ຂອງຂ້ອຍຕະຫລອດໄປ ເມື່ອໃດຫາກພຣະຜູ້ເປັນເຈົ້າໄດ້ທຳລາຍສັດຕູທັງໝົດຂອງເຈົ້າແລ້ວ.
[16]ຂໍໃຫ້ຄຳສັນຍາຂອງພວກເຮົາທີ່ມີຕໍ່ກັນຍັງຄົງຢູ່ ຖ້າວ່າເຈົ້າຜິດຄຳສັນຍາ ພຣະຜູ້ເປັນເຈົ້າຈະ
ຊົງລົງໂທດເຈົ້າ.” [17]ຕໍ່ມາອີກ ໂຢນາທານໄດ້ຂໍຮ້ອງໃຫ້ດາວິດສັນຍາວ່າ ໃຫ້ຮັກຕົນເພາະວ່າ
ໂຢນາທານຮັກດາວິດຫລາຍ ເທົ່າກັບຊີວິດຂອງຕົນເອງ. [18]ແລ້ວໂຢນາທານຈຶ່ງເວົ້າຕໍ່ດາວິດ
ວ່າ, “ມື້ອື່ນເປັນມື້ສະຫລອງເດືອນອອກໃໝ່ ຖ້າວ່າ ເຈົ້າບໍ່ຢູ່ຫັ້ນ ເພິ່ນກໍຈະເຫັນບ່ອນນັ່ງຫວ່າງ.
[19]ໃນມື້ຕໍ່ໄປ ເພິ່ນກໍຈະເຫັນເຈົ້າຂາດອີກ ດັ່ງນັ້ນ ຈົ່ງໄປລີ້ຢູ່ບ່ອນທີ່ເຈົ້າລີ້ຢູ່ວ່າງແຕ່ກ່ອນນັ້ນ
ແລະໃຫ້ລີ້ຢູ່ທາງຫລັງກອງຫີນ. [20]ແລ້ວຂ້ອຍຈະຍິງລູກທະນູສາມລູກໄປໃສ່ບ່ອນນັ້ນ ຄືຍິງໃສ່
ຈຸດໃດຈຸດໜຶ່ງ. [21]ຕໍ່ໄປຂ້ອຍຈະບອກຄົນໃຊ້ຂອງຂ້ອຍໄປຊອກຫາລູກໜ້າທະນູນັ້ນມາ ແລະຖ້າ
ຂ້ອຍບອກລາວວ່າ, “ຫັ້ນເດ ລູກທະນູຢູ່ທາງນີ້ ເກັບເອົາແມ ກໍໝາຍຄວາມວ່າເຈົ້າປອດໄພ
ແລະອອກມາໄດ້ ຂ້ອຍຂໍສາບານໃນນາມພຣະຜູ້ເປັນເຈົ້າວ່າ ເຈົ້າຈະບໍ່ເປັນອັນຕະລາຍຢ່າງ-
ໃດ. [22]ແຕ່ຖ້າຂ້ອຍບອກລາວວ່າ, “ລູກໜ້າທະນູຢູ່ພຸ້ນ” ຈົ່ງໜີໄປ ເພາະວ່າພຣະຜູ້ເປັນເຈົ້າເປັນ
ຜູ້ໃຊ້ເຈົ້າໄປ. [23]ສ່ວນຄຳໝັ້ນສັນຍາທີ່ພວກເຮົາໄດ້ມີຕໍ່ກັນນັ້ນ ພຣະຜູ້ເປັນເຈົ້າຊົງເປັນພະຍານ
ແລະເຮັດໃຫ້ພວກເຮົາຮັກສາມັນໄວ້ຕະຫລອດໄປ.”

[24]ດັ່ງນັ້ນ ດາວິດຈຶ່ງໄປລີ້ຢູ່ໃນທົ່ງນາ ຝ່າຍເຈົ້າຊີວິດຊາອູນກໍສະເດັດມາຮັບປະທານອາຫານ
ໃນມື້ສະຫລອງເດືອນອອກໃໝ່. [25]ແລະນັ່ງຢູ່ແປະກັບຝາຕາມທີ່ເຄີຍນັ່ງ ອັບເນນັ່ງຖັດເພິ່ນໄປ
ໂຢນາທານນັ່ງກົງກັນຂ້າມກັບເພິ່ນ ສ່ວນບ່ອນນັ່ງຂອງດາວິດນັ້ນເປົ່າວ່າງ. [26]ໃນມື້ນັ້ນ ຊາອູນ
ບໍ່ໄດ້ເວົ້າຫຍັງໝົດ ເພາະເພິ່ນຄິດວ່າ ອາດມີບາງສິ່ງບາງຢ່າງເກີດຂຶ້ນໂດຍບໍ່ໄດ້ຄາດຝັນຊຶ່ງເຮັດ
ໃຫ້ດາວິດມີມົນທິນ. [27]ມື້ຕໍ່ມາ ເປັນມື້ຫລັງຈາກເດືອນອອກໃໝ່ ບ່ອນຂອງດາວິດກໍຍັງເປົ່າວ່າງ
ຢູ່ ຊາອູນຈຶ່ງຖາມໂຢນາທານວ່າ, “ເປັນຫຍັງມື້ວານນີ້ ແລະມື້ນີ້ດາວິດຈຶ່ງບໍ່ມາຮ່ວມຮັບປະ-
ທານອາຫານ?”

[28]ໂຢນາທານຕອບວ່າ, “ລາວຂໍອະນຸຍາດນຳຂ້ານ້ອຍໄປເມືອງເບັດເລເຮັມ.” [29]ລາວໄດ້ເວົ້າ
ວ່າ, “ອະນຸຍາດໃຫ້ຂ້ອຍເທາະ ເພາະວ່າຄອບຄົວຂອງຂ້ອຍໄດ້ສະຫລອງງານຖວາຍບູຊາໃນ
ເມືອງ ແລະພວກອ້າຍຂອງຂ້ອຍກໍສັ່ງໃຫ້ຂ້ອຍໄປທີ່ນັ້ນ ດັ່ງນັ້ນ ຖ້າເຈົ້າເປັນໝູ່ຂອງຂ້ອຍຈົ່ງ
ອະນຸຍາດໃຫ້ຂ້ອຍໄປຫາພີ່ນ້ອງຂອງຂ້ອຍສາ ດ້ວຍເຫດນີ້ແຫລະ ດາວິດຈຶ່ງບໍ່ໄດ້ມາຮ່ວມໂຕະ
ນຳພໍ່.”

[30]ຊາອູນ ຈຶ່ງຮ້າຍໃຫ້ໂຢນາທານ ແລະເວົ້າຕໍ່ລາວວ່າ, “ລູກທໍລະຍົດ ດຽວນີ້ຂ້ອຍຮູ້ວ່າເຈົ້າ
ເວົ້າເຂົ້າຂ້າງດາວິດ ແລະເຈົ້າກຳລັງເຮັດໃຫ້ເຈົ້າເອງກັບແມ່ເຈົ້າເສື່ອມເສຍກຽດ. [31]ຕະຫລອດ

ເວລາທີ່ ດາວິດ ຍັງມີຊີວິດຢູ່ນີ້ ເຈົ້າຈະບໍ່ໄດ້ເປັນເຈົ້າຊີວິດຂອງປະເທດນີ້ຈັກເທື່ອ ດຽວນີ້ ຈົ່ງໄປ
ນຳຕົວລາວມານີ້ ລາວຄວນຈະຕາຍ.”
[32]ໂຢນາທານ ເວົ້າຂຶ້ນວ່າ, “ເປັນຫຍັງລາວຈຶ່ງຄວນຈະຕາຍ ລາວໄດ້ເຮັດຫຍັງຜິດ?” [33]ໃນ
ຂະນະນັ້ນ ຊາອູນ ໄດ້ຖອດຫອກຂອງຕົນອອກເພື່ອຈະຂ້າ ໂຢນາທານ ໂຢນາທານ ຈຶ່ງຄິດພິຈາ-
ລະນາໄດ້ວ່າ ພໍ່ຂອງຕົນຍັງບໍ່ຍຸດຕິທີ່ຈະຂ້າ ດາວິດ. [34]ດັ່ງນັ້ນ ລາວຈຶ່ງລຸກອອກຈາກໂຕະດ້ວຍ
ຄວາມຮ້າຍ ແລະບໍ່ຍອມກິນຫຍັງເລີຍ ໃນມື້ນັ້ນ ເປັນມື້ທີສອງຂອງມື້ສະຫລອງເດືອນອອກໃໝ່
ລາວເສົ້າໂສກເສຍໃຈຢ່າງໜັກໃນເລື່ອງນີ້ ເພາະພໍ່ຂອງລາວໄດ້ດູຖູກ ດາວິດ.
[35]ມື້ເຊົ້າໃໝ່ຕໍ່ມາ ໂຢນາທານ ກໍໄປພົບ ດາວິດ ຢູ່ທີ່ທົ່ງນາ ຕາມທີ່ໄດ້ຕົກລົງກັນໄວ້. [36]ລາວໄດ້
ເອົາຊາຍໜຸ່ມຜູ້ໜຶ່ງໄປນຳ ລາວເວົ້າກັບຊາຍໜຸ່ມນັ້ນວ່າ, “ຈົ່ງໄປເກັບເອົາລູກໜ້າທະນູທີ່ຂ້ອຍຈະ
ຍິງໄປນີ້ ເດັກນັ້ນກໍແລ່ນໄປ. [37]ໂຢນາທານ ຈຶ່ງຍິງທະນູໄປຕົກຂ້າງລາວ ເມື່ອຊາຍໜຸ່ມຜູ້ນັ້ນໄປ
ຮອດບ່ອນລູກໜ້າທະນູຕົກ ໂຢນາທານ ກໍຮ້ອງໃສ່ລາວວ່າ, “ລູກທະນູຢູ່ພຸ້ນ ຢ່າຢືນຢູ່ທີ່ຫັ້ນຈົ່ງ
ຟ້າວໄປແມ.” [38]ຊາຍໜຸ່ມຄົນນັ້ນກໍໄປເກັບເອົາລູກທະນູແລ້ວກັບຄືນມາຫານາຍຂອງຕົນ ໂດຍບໍ່
ຮູ້ຈັກຄວາມໝາຍຫຍັງໝົດ. [39]ມີແຕ່ ໂຢນາທານ ແລະ ດາວິດ ເທົ່ານັ້ນທີ່ຮູ້ຈັກ. [40]ໂຢນາທານ ໄດ້
ເອົາລູກອາວຸດຂອງລາວໃຫ້ຊາຍໜຸ່ມນັ້ນ ແລະບອກໃຫ້ລາວເອົາກັບຄືນເມືອໄວ້ໃນເມືອງ.
[41]ຫລັງຈາກຊາຍໜຸ່ມຈາກໄປແລ້ວ ດາວິດ ກໍອອກຈາກບ່ອນລີ້ ກົ້ມຂາບລົງຕໍ່ໜ້າ ໂຢນາທານ
ສາມເທື່ອ ດາວິດ ກັບ ໂຢນາທານ ກອດກັນທັງຮ້ອງທັງໄຫ້ ດາວິດ ໂສກເສົ້າເສຍໃຈຫລາຍ.
[42]ແລ້ວ ໂຢນາທານ ຈຶ່ງເວົ້າຕໍ່ ດາວິດ ວ່າ, “ຂໍໃຫ້ພຣະເຈົ້າ ຊົງສະຖິດຢູ່ກັບເຈົ້າ ຂໍພຣະຜູ້ເປັນ-
ເຈົ້າ ຊົງເປັນພະຍານລະຫວ່າງເຈົ້າກັບຂ້ອຍ ແລະລະຫວ່າງເຊື້ອສາຍຂອງເຈົ້າກັບເຊື້ອສາຍຂອງ
ຂ້ອຍ ວ່າຈະຮັກສາຄຳໝັ້ນສັນຍາອັນສັກສິດທີ່ເຮົາມີຕໍ່ກັນ ແລະກັນນີ້ໄວ້ຕະຫລອດໄປ” ແລ້ວ
ດາວິດ ກໍຈາກໄປ ສ່ວນ ໂຢນາທານ ກໍກັບຄືນເມືອໃນເມືອງ.

# ບົດທີ 21

## ດາວິດໜີຈາກຊາອູນໄປຫາອາຣີເມເລັກ

[1]ດາວິດ ໄດ້ໄປຫາປະໂລຫິດ ອາຣີເມເລັກ ທີ່ເມືອງ ໂນບ. ເມື່ອ ອາຣີເມເລັກ ອອກມາພົບ ດາວິດ
ເພິ່ນກໍຢ້ານຈົນຕົວສັ່ນເຊັ່ນ ແລະເວົ້າວ່າ “ເປັນຫຍັງທ່ານຈຶ່ງມາຄົນດຽວ ແລະບໍ່ມີຜູ້ໃດມາກັບ
ທ່ານ?” [2]ດາວິດ ຈຶ່ງ ເວົ້າກັບປະໂລຫິດ ອາຣີເມເລັກ ວ່າ “ກະສັດ ໄດ້ສັ່ງຄວາມ ແກ່ຂ້າພະເຈົ້າ
ແລະໄດ້ບອກໄວ້ວ່າ ‘ຢ່າໃຫ້ຜູ້ໃດຮູ້ຈັກຂໍ້ຄວາມທີ່ຂ້ອຍສັ່ງແກ່ເຈົ້າ ແລະເລື່ອງຊຶ່ງເຮົາໃຊ້ເຈົ້າໄປ’
ແຕ່ຂ້າພະເຈົ້າໄດ້ນັດໝາຍ ໄວ້ກັບພວກຜູ້ຮັບ ໃຊ້ຂອງຂ້າພະເຈົ້າຢູ່ບ່ອນໜຶ່ງຕ່າງຫາກ [3]ທ່ານມີ
ຫຍັງຢູ່ໃນມືຂອງທ່ານບໍ? ຂ້າພະເຈົ້າຂໍເຂົ້າຈີ່ແດ່ຈັກຫ້າກ້ອນ ຫລືສິ່ງໃດກໍໄດ້ທີ່ທ່ານມີໃນຂະນະ
ນີ້.”
[4]ປະໂລຫິດນັ້ນໄດ້ຕອບ ດາວິດ ວ່າ “ຂ້າພະເຈົ້າບໍ່ມີເຂົ້າຈີ່ທຳມະດາ ແຕ່ມີເຂົ້າຈີ່ສັກສິດທີ່
ຖວາຍແລ້ວ ຂໍພຽງແຕ່ວ່າຄົນໜຸ່ມໄດ້ຢູ່ຫ່າງຈາກຜູ້ຍິງມາກໍແລ້ວກັນ” [5]ແລະ ດາວິດ ກໍຕອບປະ-
ໂລຫິດວ່າ “ທີ່ຈິງ ຕັ້ງແຕ່ເຮົາໄດ້ອອກມາ ພວກເຮົາບໍ່ໄດ້ຖືກຕ້ອງຜູ້ຍິງໄດ້ສາມມື້ແລ້ວ ແລະ

ເຄື່ອງນຸ່ງຂອງພວກຄົນໜຸ່ມກໍບໍລິສຸດ ແລະເຂົ້າຈີ່ນັ້ນເປັນເຂົ້າຈີ່ທຳມະດາທີ່ກິນໄດ້ ເຖິງແມ່ນວ່າ
ເຂົ້າຈີ່ນັ້ນຖືກຊຳລະໃຫ້ບໍລິສຸດໃນພາຊະນະແລ້ວກໍຕາມ.”
6ດັ່ງນັ້ນ ປະໂລຫິດຈຶ່ງມອບເຂົ້າຈີ່ສັກສິດຖວາຍໃຫ້ແກ່ດາວິດ ເພາະໃນບ່ອນນັ້ນບໍ່ມີເຂົ້າຈີ່ອັນ
ອື່ນນອກຈາກ ເຂົ້າຈີ່ທີ່ຖວາຍໄວ້ຊຶ່ງໄດ້ເກັບເອົາອອກຈາກພຣະພັກ ພຣະຜູ້ເປັນເຈົ້າ ແລ້ວ ເພື່ອ
ວາງເຂົ້າຈີ່ໃໝ່ຖວາຍແທນເຂົ້າຈີ່ເກົ່ານັ້ນ 7ໃນມື້ນັ້ນມີຊາຍຄົນໜຶ່ງຊຶ່ງເປັນຜູ້ຮັບໃຊ້ຂອງຊາອູນ
ຊື່ໂດເອັກຄົນ ເອໂດມ ຊຶ່ງເປັນຫົວໜ້າຄົນລ້ຽງສັດໃຫ້ກັບຊາອູນ ໄດ້ຢູ່ບ່ອນນັ້ນ ເພື່ອເຝົ້າພຣະຜູ້-
ເປັນເຈົ້າ 8ແລະດາວິດໄດ້ຖາມອາຮີເມເລັກວ່າ “ຢູ່ທີ່ນີ້ທ່ານບໍ່ມີຫອກ ຫລືດາບຈັກດວງໜຶ່ງບໍ?
ເພາະຂ້າພະເຈົ້າບໍ່ທັນໄດ້ເອົາດາບ ຫລືເຄື່ອງອາວຸດຕິດມືມາເລີຍ ດ້ວຍວ່າກະສັດໄດ້ສັ່ງຂ້າພະ-
ເຈົ້າອອກມາເປັນການດ່ວນ.”
9ປະໂລຫິດນັ້ນຈຶ່ງກ່າວວ່າ “ມີຢູ່ ດາບຂອງໂກລີອາດຄົນ ຟີລິດສະຕິນ ຊຶ່ງທ່ານໄດ້ຂ້າທີ່ຮ່ອມ
ພູເອລາ ນັ້ນກໍຢູ່ນີ້ ເບິ່ງແມ, ຍັງຫໍ່ຜ້າຢູ່ຂ້າງຫລັງເອໂຟດ, ນອກຈາກດວງນີ້ແລ້ວ ກໍບໍ່ມີດາບອື່ນ
ອີກ” ຖ້າທ່ານຕ້ອງການດາບນັ້ນ ຈົ່ງເອົາໄປສາ ແລະດາວິດກ່າວວ່າ “ບໍ່ມີດາບດວງອື່ນຄືກັບ
ດາບດວງນີ້ແລ້ວ ຂໍເອົາໃຫ້ຂ້າພະເຈົ້າສາ.”

### ດາວິດໜີຈາກຊາອູນໄປຫາອາກີເຊກະສັດເມືອງກາດ

10ແລະໃນມື້ນັ້ນ ດາວິດ ໄດ້ໜີຈາກພະພັກ ຊາອູນ ໄປຫາ ອາກີເຊ ກະສັດ ເມືອງກາດ 11ແລະ
ພວກຂ້າລາຊະການຂອງອາກີເຊທູນວ່າ “ດາວິດຄົນນີ້ບໍ່ແມ່ນບໍທີ່ເປັນກະສັດຂອງແຜ່ນດິນ? ບໍ່
ແມ່ນຜູ້ນີ້ບໍທີ່ໄດ້ເຕັ້ນລຳ ແລະຮ້ອງເພງຕອບຮັບກັນວ່າ ‘ຊາອູນຂ້າຄົນເປັນພັນໆ ແລະດາວິດ
ຂ້າຄົນເປັນໝື່ນໆ?’”
12ແລະດາວິດກໍຈົດຈຳຖ້ອຍຄຳເຫລົ່ານີ້ໄວ້ໃນໃຈ ແລະຢ້ານອາກີເຊກະສັດເມືອງກາດຫລາຍ
13ເພິ່ນຈຶ່ງປອມຕົວຕໍ່ໜ້າພວກເຂົາ ເຮັດຄືເປັນຄົນບ້າເວລາຢູ່ໃກ້ພວກເຂົາ ໂດຍຂີດຂຽນໃສ່ຕາມ
ປະຕູຮົ້ວ ແລະປ່ອຍໃຫ້ນ້ຳລາຍໄຫລລົງຕິດໜວດເຄົາ.
14ແລະອາກີເຊໄດ້ກ່າວແກ່ຂ້າລາຊະການຂອງຕົນວ່າ “ເບິ່ງແມ, ພວກເຈົ້າເຫັນວ່າຄົນນີ້ເປັນ
ບ້າແລ້ວ ເປັນຫຍັງ ເຈົ້າຈຶ່ງພາມາຫາເຮົາ 15ເຮົາຂາດຄົນບ້າບໍ? ພວກເຈົ້າຈຶ່ງພາຄົນນີ້ມາເຮັດ
ບ້າໃຫ້ເຮົາເບິ່ງ ຄົນຢ່າງນີ້ສົມຄວນເຂົ້າມາໃນເຮືອນຂອງເຮົາບໍ?”

## ບົດທີ 22

### ດາວິດຢູ່ທີ່ຖ້ຳອະດຸລາມ

1ດາວິດໄດ້ໜີຈາກເມືອງກາດໄປຢູ່ໃນຖ້ຳອະດຸລາມ ເມື່ອພວກອ້າຍນ້ອງ ແລະບັນດາຄອບ-
ຄົວພໍ່ຂອງເພິ່ນໄດ້ຍິນຂ່າວນັ້ນ ພວກເພິ່ນກໍໄດ້ລົງໄປຫາດາວິດຢູ່ບ່ອນນັ້ນ 2ແລ້ວທຸກຄົນທີ່ຖືກ
ກົດຂີ່ຂົ່ມເຫັງ ແລະມີໜີ້ສິນ ແລະທຸກຄົນທີ່ບໍ່ມີຄວາມພໍໃຈກໍພາກັນມາຫາເພິ່ນ ແລະເພິ່ນກໍເປັນ
ຫົວໜ້າຂອງພວກເຂົາ ມີຄົນມາຮ່ວມຢູ່ນຳດາວິດປະມານສີ່ຮ້ອຍຄົນ.
3ດາວິດກໍອອກຈາກບ່ອນນັ້ນໄປຍັງເມືອງ ມິດຊະປາ ໃນແຜ່ນດິນ ໂມອາບ ແລະເພິ່ນທູນກະ-
ສັດເມືອງ ໂມອາບວ່າ “ຂໍໂຜດໃຫ້ບິດາ ມານດາຂອງຂ້າພະເຈົ້າມາຢູ່ກັບທ່ານສາ ຈົນກວ່າຂ້າ-

ພະເຈົ້າຈະຮູ້ວ່າ ພຣະເຈົ້າ ຈະເຮັດສິ່ງໃດເພື່ອຂ້າພະເຈົ້າ” [4]ແລະເພິ່ນກໍນຳບິດາ ມານດາມາເຝົ້າ
ກະສັດແຫ່ງ ໂມອາບ ແລະທັງສອງກໍອາໄສຢູ່ກັບກະສັດຕະຫລອດເວລາ ທີ່ດາວິດຢູ່ໃນບ່ອນ
ກຳບັງທີ່ເຂັ້ມແຂງ [5]ແລ້ວຜູ້ປະກາດພຣະທຳ ຄາດ ໄດ້ບອກດາວິດວ່າ “ທ່ານຢ່າຢູ່ໃນບ່ອນກຳ
ບັງເຂັ້ມແຂງນີ້ເລີຍ ຈົ່ງເຂົ້າໄປໃນແຜ່ນດິນຢູດາເທີ້ນ” ແລ້ວດາວິດກໍໄປ ແລະເຂົ້າໄປຢູ່ໃນປ່າ
ເຮເຣັດ.

[6]ຝ່າຍຊາອູນໄດ້ຍິນວ່າມີຜູ້ພົບເຫັນດາວິດ ແລະຄົນທັງຫລາຍທີ່ຢູ່ນຳເພິ່ນ, ໃນເວລານັ້ນຊາ-
ອູນປະທັບທີ່ເມືອງ ກິເບອາ ກ້ອງຕົ້ນໄມ້ຕົ້ນໜຶ່ງຢູ່ບ່ອນສູງທີ່ເມືອງຣາມາ ເພິ່ນຖືຫອກໃນມື
ແລະບັນດາຜູ້ຮັບໃຊ້ຂອງພະອົງກໍຢືນຢູ່ອ້ອມຮອບພະອົງ [7]ແລະຊາອູນກ່າວກັບຜູ້ຮັບໃຊ້ທີ່ຢືນຢູ່
ອ້ອມຮອບພະອົງວ່າ “ຊາວເບັນຢາມິນຈົ່ງຟັງ, ລູກຂອງເຢຊີຈະໃຫ້ທົ່ງນາ ແລະ ສວນອະງຸ່ນ
ແກ່ເຈົ້າທັງຫລາຍບໍ? ຈະຕັ້ງເຈົ້າທັງຫລາຍໃຫ້ເປັນຜູ້ບັງຄັບບັນຊາກອງພັນກອງຮ້ອຍທຸກຄົນບໍ?
[8]ເຈົ້າທັງຫລາຍຈຶ່ງໄດ້ຄິດກະບົດຕໍ່ເຮົາໂດຍບໍ່ມີຜູ້ໃດບອກເຮົາເລີຍໃນເວລາລູກຂອງເຮົາເຮັດພັນ-
ທະໄມຕີກັບລູກ ຂອງເຢຊີນັ້ນ ແລະໃນພວກເຈົ້າບໍ່ມີຜູ້ໃດຮ່ວມທຸກກັບເຮົາແລະບອກແກ່ເຮົາວ່າ
ລູກຂອງເຮົາໄດ້ຍົວະຍົງຜູ້ຮັບໃຊ້ຂອງເຮົາໃຫ້ຕໍ່ສູ້ກັບເຮົາ ແລະຄອຍຖ້າດັກໂຈມຕີເຮົາຢູ່ຄືກັບທຸກ
ມື້ນີ້.”

## ຊາອູນຂ້າພວກປະໂລຫິດຂອງພຣະເຈົ້າ

[9]ໂດເອັກຄົນເອໂດມຜູ້ເປັນນາຍຂ້າໃຊ້ຂອງຊາອູນກາບທູນວ່າ “ຂ້າພະອົງເຫັນລູກເຢຊີມາທີ່
ເມືອງໂນບມາຫາ ອາຮີເມເລັກລູກອາຮີຕຸບ [10]ແລ້ວລາວກໍທູນຖາມພຣະຜູ້ເປັນເຈົ້າໃຫ້ເພິ່ນ
ແລະໄດ້ເອົາຫໍ່ອາຫານໃຫ້ພ້ອມທັງດາບຂອງໂກລີອາດຄົນຟີລິດສະຕິນໃຫ້ແກ່ເພິ່ນໄປ.”

[11]ແລ້ວກະສັດໄດ້ໃຊ້ຄົນໄປເອີ້ນປະໂລຫິດອາຮີເມເລັກ ລູກຊາຍຂອງອາຮີຕຸບ ແລະຄອບ-
ຄົວພໍ່ຂອງລາວທັງໝົດ ຜູ້ເປັນປະໂລຫິດຢູ່ທີ່ເມືອງໂນບ ແລະພວກເຂົາທຸກຄົນກໍມາຫາກະສັດ
[12]ແລະຊາອູນກ່າວວ່າ “ລູກອາຮີຕຸບເອີຍ, ຈົ່ງຟັງ” ລາວທູນຕອບກະສັດວ່າ “ເຈົ້ານາຍຂອງ
ຂ້າພະອົງ ຂ້າພະອົງຢູ່ທີ່ນີ້” [13]ແລ້ວຊາອູນກ່າວແກ່ລາວວ່າ “ເປັນຫຍັງເຈົ້າຈຶ່ງຮ່ວມກັນກະບົດຕໍ່
ເຮົາ ທັງເຈົ້າ ແລະລູກຂອງເຢຊີ ໃນການທີ່ເຈົ້າໄດ້ໃຫ້ເຂົ້າຈີ່ ແລະດາບແກ່ລາວ ແລະໄດ້ທູນ
ຖາມພຣະເຈົ້າໃຫ້ລາວເພື່ອພວກເຂົາຈະໄດ້ລຸກຂຶ້ນຕໍ່ສູ້ເຮົາແລະຄອຍຖ້າດັກໂຈມຕີເຮົາຢູ່ຄືກັບ
ທຸກມື້ນີ້.”

[14]ແລະອາຮີເມເລັກທູນຕອບກະສັດວ່າ “ໃນບັນດາຂ້າລາຊະການຜູ້ຮັບໃຊ້ຂອງພະອົງ ມີຜູ້
ໃດບໍທີ່ສັດຊື່ຄືດາວິດ ລູກເຂີຍຂອງກະສັດຜູ້ບັງຄັບບັນຊາການຂອງພະອົງ ແລະ ເປັນຜູ້ມີກຽດ
ໃນພະລາຊະວັງຂອງພະອົງ? [15]ນັ້ນເປັນເທື່ອທຳອິດທີ່ຂ້ານ້ອຍໄດ້ທູນຖາມພຣະເຈົ້າສຳລັບລາວ
ບໍ? ບໍ່ແມ່ນຢ່າງນັ້ນເລີຍ! ຂໍກະສັດຢ່າກ່າວຟ້ອງສິ່ງໃດຕໍ່ຜູ້ຮັບໃຊ້ຂອງພະອົງ ຢ່າໄດ້ກ່າວຟ້ອງຜູ້
ໃດໃນບັນດາຄອບຄົວຂອງພໍ່ຂ້ານ້ອຍ ເພາະຜູ້ຮັບໃຊ້ຂອງພະອົງບໍ່ຮູ້ເລື່ອງທັງໝົດນີ້ເລີຍ ບໍ່ວ່າ
ຫລາຍ ຫລືໜ້ອຍ.”

[16]ກະສັດກ່າວວ່າ “ອາຮີເມເລັກ ທັງເຈົ້າ ແລະຄອບຄົວພໍ່ຂອງເຈົ້າທັງໝົດຈະຕ້ອງຖືກຂ້າ
ຕາຍຢ່າງແນ່ນອນ” [17]ແລະກະສັດກໍຮັບສັ່ງແກ່ທະຫານຜູ້ຢືນເຝົ້າຢູ່ວ່າ “ຈົ່ງຫັນມາປະຫານຊີວິດ

ພວກປະໂລຫິດຂອງ ພຣະຜູ້ເປັນເຈົ້າ ເຫລົ່ານີ້ ເພາະວ່າມືຂອງພວກເຂົາຢູ່ຝ່າຍ ດາວິດ ແລະ
ຍ້ອນລາວຮູ້ແລ້ວວ່າມັນໜີໄປແຕ່ບໍ່ບອກໃຫ້ເຮົາຮູ້ຈັກ” ແຕ່ຂ້າລາຊະການຜູ້ຮັບໃຊ້ຂອງກະສັດບໍ່
ຍອມລົງມືຂ້າພວກປະໂລຫິດຂອງ ພຣະຜູ້ເປັນເຈົ້າ.

18ແລ້ວກະສັດຈຶ່ງກ່າວກັບ ໂດເອັກ ວ່າ “ເຈົ້າຈົ່ງຫັນໄປຂ້າພວກປະໂລຫິດເຫລົ່ານັ້ນ” ໂດເອັກ
ຄົນ ເອໂດມ ກໍຫັນໄປຂ້າບັນດາປະໂລຫິດໃນມື້ນັ້ນ ພວກເຂົາໄດ້ປະຫານຊີວິດແປດສິບຫ້າຄົນທີ່
ນຸ່ງຜ້າປ່ານ ເອໂຟດ 19ແລະ ຊາອູນ ໄດ້ໂຈມຕີເມືອງ ໂນບ ຊຶ່ງເປັນເມືອງຂອງປະໂລຫິດດ້ວຍຄົມ
ດາບ ຂ້າທັງຜູ້ຊາຍ ຜູ້ຍິງ ເດັກນ້ອຍແລະເດັກອ່ອນທີ່ຍັງດູດນົມຢູ່ ງົວ ລາ ແລະແກະດ້ວຍຄົມ
ດາບ.

20ຈາກຈຳນວນພວກລູກຊາຍຂອງ ອາຮີເມເລັກ ລູກຊາຍ ອາຮີຕຸບ ມີຜູ້ໜຶ່ງຊື່ ອາບີອາທາ ໄດ້
ລອດພົ້ນ ແລະໜີ ໄປຢູ່ນຳ ດາວິດ 21ອາບີອາທາ ກໍບອກ ດາວິດ ວ່າ ຊາອູນ ໄດ້ຂ້າປະໂລຫິດຂອງ
ພຣະຜູ້ເປັນເຈົ້າ 22ດາວິດ ຈຶ່ງເວົ້າກັບ ອາບີອາທາ ວ່າ “ໃນມື້ນັ້ນ, ຂະນະທີ່ ໂດເອັກ ຄົນ ເອໂດມ ຢູ່
ບ່ອນນັ້ນ ເຮົາກໍຮູ້ແລ້ວວ່າ ລາວຈະ ຕ້ອງບອກ ຊາອູນ ຢ່າງແນ່ນອນ, ເຮົາເປັນຕົ້ນເຫດແຫ່ງ
ຄວາມຕາຍຂອງຄົນທັງໝົດໃນຄອບຄົວພໍ່ຂອງເຈົ້າ 23ຈົ່ງຢູ່ກັບເຮົາສາ ຢ່າຢ້ານເລີຍ ເພາະຜູ້ທີ່
ຊອກຫາຈະຂ້າຊີວິດຂອງເຈົ້າ ກໍຊອກຫາຊີວິດຂອງເຮົາເຊັ່ນກັນ ເຈົ້າຢູ່ກັບເຮົາກໍຈະປອດໄພ.”

# ບົດທີ 23

## ການພະເນຈອນ ແລະການຫລົບໜີຂອງດາວິດ

1ມີຄົນມາບອກ ດາວິດ ວ່າ “ເບິ່ງແມ, ຄົນ ຟີລິດສະຕິນ ກຳລັງໂຈມຕີເອົາ ເມືອງ ເກອີລາ ຢູ່
ແລະປຸ້ນເອົາເຂົ້າທີ່ລານເຂົ້າ” 2ດາວິດ ຈຶ່ງທູນຖາມ ພຣະຜູ້ເປັນເຈົ້າ ວ່າ “ສົມຄວນທີ່ຂ້າພະອົງຈະ
ໄປຕໍ່ສູ້ກັບຄົນ ຟີລິດສະຕິນ ເຫລົ່ານັ້ນບໍ?” ແລະ ພຣະຜູ້ເປັນເຈົ້າ ກ່າວກັບ ດາວິດ ວ່າ “ຈົ່ງໄປ
ແລະເຈົ້າຈະຮົບຊະນະຊາວ ຟີລິດສະຕິນ ແລະຊ່ວຍເມືອງ ເກອີລາ ໃຫ້ພົ້ນ.”

3ແຕ່ຄົນທັງຫລາຍຂອງ ດາວິດ ໄດ້ບອກເພິ່ນວ່າ “ເບິ່ງແມ, ພວກເຮົາທີ່ຢູ່ໃນ ຢູດາ ກໍຢ້ານຢູ່
ແລ້ວ ຖ້າພວກເຮົາ ຂຶ້ນໄປສູ້ຮົບທີ່ ເກອີລາ ກັບກອງທັບຂອງ ຟີລິດສະຕິນ ເຮົາຈະຢ້ານຫລາຍ
ຂຶ້ນເທົ່າໃດນໍ?” 4ແລ້ວ ດາວິດ ກໍທູນຖາມ ພຣະຜູ້ເປັນເຈົ້າ ອີກ ແລະ ພຣະຜູ້ເປັນເຈົ້າ ກ່າວຕອບ
ແລະບອກເພິ່ນວ່າ “ຈົ່ງໄປ ເກອີລາ ສາ ເພາະ ເຮົາຈະມອບພວກ ຟີລິດສະຕິນ ໄວ້ໃນກຳມືຂອງ
ເຈົ້າ.”

5ແລະ ດາວິດ ກັບຄົນຂອງເພິ່ນກໍໄປ ເກອີລາ ສູ້ຮົບກັບພວກ ຟີລິດສະຕິນ ແລະໄດ້ຍຶດເອົາສັດ-
ລ້ຽງຂອງພວກເຂົາໄປ ແລະຂ້າຟັນພວກເຂົາເປັນຈຳນວນຫລາຍ ດັ່ງນັ້ນ ດາວິດ ສາມາດຊ່ວຍ-
ເຫຼືອຊາວເມືອງ ເກອີລາ ໄດ້.

6ແລະຢູ່ມາ ເມື່ອ ອາບີອາທາ ລູກຊາຍຂອງ ອາຮີເມເລັກ ໄດ້ປົບໜີໄປຫາ ດາວິດ ທີ່ ເມືອງ ເກອີ-
ລາ ນັ້ນ ລາວຖື ເອໂຟດ ລົງໄປນຳ. 7ມີຄົນໄປທູນ ຊາອູນ ວ່າ ດາວິດ ມາທີ່ ເກອີລາ ແລ້ວ ຊາອູນ
ຈຶ່ງກ່າວວ່າ “ພຣະເຈົ້າ ມອບລາວໄວ້ໃນມືຂອງເຮົາແລ້ວ ເພາະລາວໄດ້ເຂົ້າໄປໃນເມືອງທີ່ມີກຳ-
ແພງອ້ອມ ແລະໄດ້ຂັງຕົວເອງໄວ້.” 8ແລະ ຊາອູນ ໃຫ້ເກນເອົາປະຊາຊົນທັງປວງເຂົ້າສົງຄາມ

ເພື່ອຈະລົງໄປ ເກອີລາອ້ອມດາວິດກັບບັນດາຄົນຂອງເພິ່ນໄວ້.
[9]ດາວິດຮູ້ວ່າຊາອູນຄິດຮ້າຍຕໍ່ສູ້ຕົນ, ເພິ່ນຈຶ່ງເວົ້າກັບປະໂລຫິດອາບີອາທາວ່າ "ຈົ່ງນຳເອົາ
ເອໂຟດມາບ່ອນນີ້ ສາ" [10]ດາວິດໄດ້ອ້ອນວອນວ່າ "ຂ້າແດ່ພຣະຜູ້ເປັນເຈົ້າ ພຣະເຈົ້າຂອງອິ-
ສຣາເອນ ຜູ້ຮັບໃຊ້ຂອງພຣະອົງໄດ້ຍິນຂ່າວທີ່ແນ່ນອນວ່າຊາອູນຫາຊ່ອງທາງທີ່ຈະມາເກອີລາ
ເພື່ອທຳລາຍເມືອງນີ້ ເພາະຂ້າພະອົງເປັນຕົ້ນເຫດ [11]ຊາວເກອີລາຈະມອບຂ້າພະອົງໄວ້ໃນມື
ຂອງກະສັດຊາອູນບໍ? ຫລືຊາອູນຈະສະເດດລົງມາຕາມທີ່ຜູ້ຮັບໃຊ້ ຂອງພຣະອົງໄດ້ຍິນນັ້ນ?
ຂ້າແດ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງອິສຣາເອນ ຂໍພຣະອົງບອກຜູ້ຮັບໃຊ້ຂອງພຣະອົງສາ."
ແລະພຣະຜູ້ເປັນເຈົ້າກ່າວວ່າ "ລາວຈະລົງມາ" [12]ແລ້ວດາວິດຈຶ່ງທູນຖາມວ່າ "ຊາວເກອີລາ
ຈະມອບຂ້າພະອົງ ແລະຄົນຂອງຂ້າພະອົງໄວ້ໃນມືຂອງຊາອູນບໍ?" ແລະພຣະຜູ້ເປັນເຈົ້າໄດ້
ຕອບວ່າ "ພວກເຂົາຈະມອບເຈົ້າໄວ້."
[13]ແລ້ວ ດາວິດ ກັບຄົນຂອງຕົນຊຶ່ງມີປະມານຫົກຮ້ອຍຄົນກໍຍົກຍ້າຍໄປຈາກເກອີລາຕາມທີ່
ພວກເຂົາຈະໄປໄດ້ ແລະມີຄົນໄປບອກຊາອູນວ່າ ດາວິດໜີໄປຈາກເກອີລາແລ້ວຊາອູນກໍຍົກ-
ເລີກການຕິດຕາມດາວິດ [14]ແລະດາວິດກໍຢູ່ໃນຖິ່ນແຫ້ງແລ້ງກັນດານມີບ່ອນກຳບັງທີ່ເຂັ້ມແຂງ
ແລະຢູ່ໃນເຂດພູເຂົາໃນປ່າຊີເຟ ແລະຊາອູນກໍຊອກຫາເພິ່ນທຸກໆມື້ ແຕ່ພຣະເຈົ້າບໍ່ໄດ້ມອບ
ດາວິດໄວ້ໃນມືຂອງຊາອູນ [15]ແລະດາວິດຮູ້ວ່າຊາອູນໄດ້ອອກມາຊອກຫາເພື່ອຂ້າຕົນ ດາວິດ
ຈຶ່ງຢູ່ໃນປ່າຊີເຟ.[ກ]
[16]ໂຢນາທານລູກຂອງຊາອູນໄດ້ຂຶ້ນໄປຫາດາວິດທີ່ປ່າໄມ້ ແລະໜູນໃຈລາວໃຫ້ເຂັ້ມແຂງ
ຂຶ້ນໃນພຣະເຈົ້າ [17]ໂຢນາທານເວົ້າກັບດາວິດວ່າ "ຢ່າຢ້ານເລີຍ ເພາະວ່າມືຂອງຊາອູນພໍ່ຂອງ
ຂ້ອຍຈະບໍ່ພົບເຈົ້າ ແລະເຈົ້າຈະໄດ້ເປັນກະສັດ ປົກຄອງເໜືອຊາວອິສຣາເອນ ແລະຂ້ອຍຈະ
ເປັນຜູ້ຮອງຕໍ່ຈາກເຈົ້າ ຊາອູນພໍ່ຂອງຂ້ອຍກໍຮູ້ເລື່ອງນີ້ ດີກັນ" [18]ແລະທັງສອງກໍເຮັດຄຳໝັ້ນ-
ສັນຍາຕໍ່ພຣະພັກພຣະຜູ້ເປັນເຈົ້າ ດາວິດຍັງຢູ່ໃນປ່າໄມ້ ແລະໂຢນາທານກໍກັບໄປໃນວັງ.
[19]ຝ່າຍຊາວຊີເຟໄດ້ພາກັນຂຶ້ນໄປຫາຊາອູນທີ່ກິເບອາທູນວ່າ "ດາວິດໄດ້ລີ້ຕົວຢູ່ທ່າມກາງ
ພວກຂ້ານ້ອຍ ໃນທີ່ກຳບັງທີ່ເຂັ້ມແຂງ ໃນປ່າໄມ້ເທິງໂນນພູຮາກີລາທາງທິດໃຕ້ຖິ່ນກັນດານບໍ່
ແມ່ນບໍ? [20]ຂ້າແດ່ກະສັດ ເພາະສະນັ້ນບັດນີ້ຂໍສະເດັດລົງໄປຕາມຄວາມປາດຖະໜາທີ່ຈະລົງໄປ
ຝ່າຍພວກຂ້ານ້ອຍຈະມອບລາວໄວ້ໃນມືຂອງທ່ານ."
[21]ແລ້ວຊາອູນກ່າວວ່າ "ຂໍພຣະຜູ້ເປັນເຈົ້າອຳນວຍພຣະພອນແກ່ພວກທ່ານ ເພາະພວກ
ທ່ານປານີເຮົາ [22]ຈົ່ງໄປຄົ້ນເບິ່ງອີກເພື່ອໃຫ້ແນ່ນອນຫລາຍຂຶ້ນ ແລະໃຫ້ຮູ້ວ່າລາວຢູ່ບ່ອນໃດ
ແລະໃຜພົບເຫັນລາວແດ່ ເພາະມີຄົນບອກຂ້ອຍວ່າລາວເປັນຄົນສະຫລາດຫລັກແຫລມຫລາຍ
[23]ເພາະສະນັ້ນ ຈົ່ງໄປສັງເກດເບິ່ງບ່ອນທີ່ລາວລີ້ຕົວຢູ່ ແລະກັບມາລາຍງານຂ່າວທີ່ແນ່ນອນໃຫ້
ກັບເຮົາຟັງ ແລ້ວເຮົາຈະໄປກັບພວກທ່ານ ຖ້າລາວຢູ່ໃນເຂດນັ້ນ ເຮົາຈະຄົ້ນຫາລາວທົ່ວທັງຄົນ
ຢູດາທີ່ນັບເປັນພັນໆນັ້ນ."
[24]ພວກເຂົາກໍລຸກຂຶ້ນໄປປ່າຊີເຟກ່ອນຊາອູນ ຝ່າຍດາວິດກັບຄົນຂອງເພິ່ນກໍຢູ່ໃນຖິ່ນແຫ້ງ-

[ກ]ພາສາອັງກິດ Ziph

ແລ້ງກັນດານ ມາໂອນ ໃນທົ່ງພຽງພາກໃຕ້ຂອງຖິ່ນກັນດານ [25]ຊາອູນ ກັບຄົນຂອງເພິ່ນໄດ້ອອກ
ຊອກຫາດາວິດ ແຕ່ມີຄົນບອກຂ່າວນີ້ໃຫ້ດາວິດຟັງກ່ອນ ເພິ່ນຈຶ່ງລົງໄປເນີນພູສີລາ ແລະຢູ່ໃນ
ຖິ່ນແຫ້ງແລ້ງກັນດານ ມາໂອນ ເມື່ອຊາອູນ ໄດ້ຍິນດັ່ງນັ້ນ ກໍຕິດຕາມດາວິດ ໄປໃນຖິ່ນແຫ້ງ-
ແລ້ງກັນດານ ມາໂອນ [26]ເມື່ອຊາອູນ ສະເດັດໄປຟາກພູເຂົາອີກຟາກໜຶ່ງ ສ່ວນດາວິດກັບພວກ
ຂອງຕົນກໍຢູ່ຟາກພູເຂົາອີກຟາກໜຶ່ງ ດາວິດຟ້າວປົບໜີຈາກໜ້າຊາອູນ ແຕ່ຊາອູນກັບຄົນຂອງ
ພະອົງໄດ້ມາອ້ອມຮອບ ດາວິດ ກັບຄົນຂອງ ເພິ່ນ ເພື່ອຈະຈັບ [27]ແຕ່ມີຜູ້ສົ່ງຂ່າວຄົນໜຶ່ງມາບອກ
ຊາອູນ ວ່າ “ເຊີນຮີບສະເດັດມາເຖີດ ເພາະພວກ ຟີລິດສະຕິນ ຍົກກອງທັບມາບຸກລຸກແຜ່ນດິນ
ແລ້ວ.”

[28]ຊາອູນ ຈຶ່ງສະເດັດກັບຈາກການໄລ່ຕາມດາວິດ ໄປສູ້ຮົບກັບ ຟີລິດສະຕິນ ດັ່ງນັ້ນ ພວກເຂົາ
ຈຶ່ງ ເອີ້ນບ່ອນນັ້ນວ່າ ເສລາ-ຣາມາເລກົດ (ຫີນດານທີ່ແຍກຈາກກັນ). [29]ດາວິດ ກໍອອກຈາກ
ບ່ອນນັ້ນໄປອາໄສຢູ່ໃນບ່ອນກຳບັງທີ່ເຂັ້ມແຂງແຫ່ງ ເອັນ-ເກດີ.

# ບົດທີ 24

## ດາວິດໄວ້ຊີວິດຊາອູນ

[1]ເມື່ອ ຊາອູນ ກັບມາຈາກການຕໍ່ສູ້ກັບພວກ ຟີລິດສະຕິນ ກໍມີຄົນມາບອກວ່າ ດາວິດ ຢູ່ໃນຖິ່ນ
ແຫ້ງແລ້ງກັນດານໃກ້ໆ ເມືອງ ເອັນ-ເກດີ. [2]ຊາອູນ ຈຶ່ງ ເອົາທະຫານຜູ້ເກັ່ງກ້າທີ່ສຸດໃນ ອິສຣາ-
ເອນ ສາມພັນຄົນອອກຊອກຫາ ດາວິດ ແລະທະຫານຂອງລາວຢູ່ທາງທິດຕາເວັນອອກຂອງຫີນ
ດານແບ້ປ່າ. [3]ຊາອູນ ໄດ້ເຂົ້າໄປຖ່າຍໃນຖ້ຳແຫ່ງໜຶ່ງໃກ້ໆ ກັບຄອກແກະຢູ່ແຄມທາງ ສ່ວນດາ-
ວິດ ແລະທະຫານຂອງລາວກໍລີ້ຢູ່ໃນຖ້ຳນັ້ນ. [4]ພວກທະຫານຈຶ່ງເວົ້າຕໍ່ ດາວິດວ່າ, “ນີ້ແມ່ນໂຊກ
ຂອງທ່ານແລ້ວ ພຣະຜູ້ເປັນເຈົ້າ ໄດ້ມອບສັດຕູຂອງທ່ານໄວ້ໃນອຳນາດຂອງທ່ານຕາມທີ່ຊົງ
ບອກໄວ້ນັ້ນແລ້ວ ແລະບັດນີ້ ທ່ານຈົ່ງເຮັດກັບສັດຕູຂອງທ່ານຕາມທີ່ຕ້ອງການ” ດາວິດ ໄດ້ຄານ
ອອກມາ ແລ້ວຕັດ ເອົາ ເສື້ອຍາວຂອງ ຊາອູນ ໂດຍທີ່ພະອົງບໍ່ຮູ້ເມື່ອຫຍັງໝົດ. [5]ແຕ່ ດາວິດ ກໍມີ
ຄວາມຮູ້ສຶກເສຍໃຈ. [6]ຈຶ່ງເວົ້າຕໍ່ທະຫານຂອງຕົນວ່າ, “ຂໍພຣະຜູ້ເປັນເຈົ້າຢ່າອະນຸຍາດໃຫ້ຂ້ອຍ
ເຮັດອັນຕະລາຍຢ່າງໃດໝົດແກ່ເຈົ້ານາຍຂອງຂ້ອຍ ຊຶ່ງເປັນຜູ້ທີ່ ພຣະຜູ້ເປັນເຈົ້າ ຊົງເລືອກເອົາ
ເປັນເຈົ້າຊີວິດ ຂ້ອຍບໍ່ຄວນເຮັດອັນຕະລາຍແກ່ພະອົງເລີຍ ເພາະພະອົງເປັນເຈົ້າຊີວິດທີ່ ພຣະ-
ຜູ້ເປັນເຈົ້າ ຊົງເລືອກໄວ້.” [7]ດັ່ງນັ້ນ ດາວິດ ຈຶ່ງບອກໃຫ້ທະຫານຂອງຕົນຢ່າຕໍ່ສູ້ຊາອູນ.

[8]ຊາອູນ ໄດ້ອອກຈາກຖ້ຳນັ້ນ ແລະໄດ້ເດີນທາງຕໍ່ໄປ ແລ້ວ ດາວິດ ກໍອອກໄປຕາມຫລັງພະອົງ
ແລະ ເອີ້ນໃສ່ພະອົງວ່າ, “ພະອົງເອີຍ” ຊາອູນ ກໍຫລຽວຫລັງເບິ່ງອ້ອມໆ ດາວິດ ກໍກົ້ມຂາບລົງ
ຄຳນັບ. [9]ແລ້ວທູນຖາມວ່າ, “ເປັນຫຍັງພະອົງຈຶ່ງຟັງສຽງປະຊາຊົນ ທີ່ເວົ້າວ່າຂ້ານ້ອຍກຳລັງ
ພະຍາຍາມຈະທຳຮ້າຍພະອົງ. [10]ພະອົງຊົງ ເຫັນດ້ວຍຕົນ ເອງ ແລ້ວວ່າ ມື້ນີ້ ທີ່ຖ້ຳນັ້ນ ພຣະຜູ້-
ເປັນເຈົ້າ ໄດ້ຊົງມອບພະອົງໄວ້ໃນອຳນາດຂອງຂ້ານ້ອຍ ບາງຄົນໄດ້ບອກໃຫ້ຂ້ານ້ອຍຂ້າພະອົງ
ເສຍ ແຕ່ວ່າຂ້ານ້ອຍຮູ້ສຶກອີດູຕົນພະອົງ ຂ້ານ້ອຍຈຶ່ງບອກວ່າ ຂ້ານ້ອຍບໍ່ຄວນເຮັດອັນຕະລາຍ
ແກ່ພຣະອົງເລີຍ ເພາະວ່າພະອົງ ເປັນຜູ້ທີ່ ພຣະຜູ້ເປັນເຈົ້າ ຊົງເລືອກໃຫ້ເປັນເຈົ້າຊີວິດ. [11]ຂໍຊົງ

ທອດພະເນດເບິ່ງສົ້ນເສື້ອລ່າມຂອງພະອົງທີ່ຂ້ານ້ອຍກຳລັງຖືຢູ່ນີ້ ຂ້ານ້ອຍໄດ້ຕັດມັນອອກ ແຕ່
ວ່າ ຂ້ານ້ອຍບໍ່ໄດ້ຂ້າພະອົງ ນັ້ນເປັນສິ່ງທີ່ພະອົງຄວນໝັ້ນໃຈວ່າ ຂ້ານ້ອຍບໍ່ໄດ້ຄິດກະບົດ ຫລື
ຄິດເຮັດຮ້າຍພະອົງແຕ່ຢ່າງໃດ ແຕ່ເຖິງປານນັ້ນ ພະອົງກໍຍັງຕາມຂ້າຂ້ານ້ອຍ ໂດຍທີ່ຂ້ານ້ອຍ
ບໍ່ໄດ້ເຮັດຜິດຫຍັງຕໍ່ພະອົງ. [12]ຂໍໃຫ້ພຣະຜູ້ເປັນເຈົ້າຊົງຕັດສິນວ່າ ລະຫວ່າງພວກເຮົາທັງສອງ
ຄົນນີ້ໃຜເປັນຜູ້ຜິດ ຂໍພຣະຜູ້ເປັນເຈົ້າຊົງລົງໂທດພະອົງໃນກິດຈະການທີ່ພະອົງໄດ້ເຮັດຕໍ່ຂ້າ-
ນ້ອຍ ເພາະວ່າຂ້ານ້ອຍບໍ່ໄດ້ເຮັດອັນຕະລາຍຕໍ່ສູ້ພະອົງແມ່ນແຕ່ໜ້ອຍດຽວ. [13]ພະອົງກໍຮູ້ໃນຄຳ
ໂບຮານທີ່ວ່າ, "ຄວາມຊົ່ວກໍຕ້ອງແກ້ແຄ້ນດ້ວຍຄົນຊົ່ວ" ແຕ່ຂ້ານ້ອຍບໍ່ໄດ້ເຮັດຮ້າຍພະອົງ.
[14]ຈົ່ງເບິ່ງວ່າ ເຈົ້າຊີວິດອິສຣາເອນກຳລັງຈະຂ້າຜູ້ໃດ ພຣະອົງຊົງໄລ່ຕິດຕາມຫຍັງ ໄລ່ຕິດຕາມ
ໝາຕາຍ ຫລືໂຕໝັດ. [15]ພຣະຜູ້ເປັນເຈົ້າຈະຊົງຕັດສິນວ່າໃຜໃນພວກເຮົາເປັນຄົນຜິດ ຂໍໃຫ້ພະ
ອົງຊົງທອດພະເນດເບິ່ງໃນເລື່ອງນີ້ ຂໍຊົງປ້ອງກັນໃຫ້ຂ້ານ້ອຍພົ້ນຈາກພະຫັດຂອງພະອົງສາ."

[16]ເມື່ອດາວິດເວົ້າສຸດແລ້ວ ຊາອູນກໍກ່າວວ່າ, "ດາວິດລູກຂອງພໍ່ເອີຍ ແມ່ນເຈົ້າແທ້ບໍທີ່ເວົ້າ
ນັ້ນ." [17]ແລ້ວພະອົງກໍຮ້ອງໄຫ້ ແລະເວົ້າຕໍ່ດາວິດວ່າ, "ເຈົ້າເປັນຄົນຖືກ ແຕ່ຂ້ອຍເປັນຄົນຜິດ
ເຈົ້າໄດ້ເຮັດດີຕໍ່ຂ້ອຍໃນຂະນະທີ່ຂ້ອຍໄດ້ເຮັດຊົ່ວຕໍ່ເຈົ້າ. [18]ມື້ນີ້ ເຈົ້າໄດ້ສະແດງຄວາມເມດຕາ
ກະລຸນາຕໍ່ຂ້ອຍ ເພາະເຈົ້າບໍ່ໄດ້ຂ້າຂ້ອຍ ທັງໆ ທີ່ພຣະຜູ້ເປັນເຈົ້າຊົງໄດ້ມອບຂ້ອຍໄວ້ໃນອຳ-
ນາດຂອງເຈົ້າແລ້ວ. [19]ຄົນທີ່ຈັບສັດຕູຂອງຕົນໄດ້ແລ້ວປ່ອຍໄປຢ່າງປອດໄພຈະມີບໍ? ຂໍໃຫ້
ພຣະເຈົ້າຊົງອວຍພອນໃນສິ່ງທີ່ເຈົ້າໄດ້ເຮັດກັບຂ້ອຍໃນມື້ນີ້. [20]ດຽວນີ້ ຂ້ອຍຮູ້ຢ່າງຄັກແນ່ແລ້ວ
ວ່າ ເຈົ້າຈະເປັນເຈົ້າຊີວິດຂອງອິສຣາເອນ ແລະພະລາຊະອາຈັກຈະຢູ່ໃຕ້ການປົກຄອງຂອງ
ເຈົ້າຕໍ່ໄປ. [21]ແຕ່ວ່າ ຂໍໃຫ້ສັນຍາກັບຂ້ອຍໃນນາມພຣະຜູ້ເປັນເຈົ້າວ່າ ເຈົ້າຈະສະຫງວນເຊື້ອ-
ສາຍຂອງຂ້ອຍໄວ້ ເພື່ອວ່າຊື່ຂ້ອຍແລະຊື່ຄອບຄົວຂອງຂ້ອຍຈະບໍ່ຖືກຫລົງລືມໄປຈົນໝົດສິ້ນ.

[22]ດາວິດກໍສັນຍາວ່າ ລາວຈະປະຕິບັດຕາມ. ແລ້ວຊາອູນກໍກັບຄືນເມືອ ສ່ວນດາວິດ ແລະ
ທະຫານຂອງລາວກໍກັບຄືນເມືອບ່ອນລີ້ຂອງພວກເຂົາ.

# ບົດທີ 25

## ການສິ້ນຊີວິດຂອງຊາມູເອນ

[1]ຝ່າຍຊາມູເອນກໍສິ້ນຊີວິດ ແລະບັນດາຊາວອິສຣາເອນກໍໂຮມກັນໄວ້ທຸກໃຫ້ເພິ່ນ ແລະ
ພວກເຂົາໄດ້ຝັງສົບເພິ່ນ ໄວ້ໃນບ້ານຂອງເພິ່ນຢູ່ຣາມາ.

## ດາວິດ ນາບານ ແລະນາງອາບີກາຍ

[2]ແລະ ດາວິດໄດ້ລົງໄປຍັງຖິ່ນແຫ້ງແລ້ງກັນດານປາຣານ. ມີຊາຍຄົນໜຶ່ງໃນເມືອງມາໂອນ
ຊຶ່ງມີທີ່ດິນຢູ່ໃນກາເມນລາວເປັນຄົນຮັ່ງມີຫລາຍ ລາວມີແກະສາມພັນໂຕ ແລະແບ້ໜຶ່ງພັນໂຕ
ລາວຢູ່ກາເມນເວລາທີ່ລາວຕັດຂົນແກະຂອງລາວ [3]ຊາຍຄົນນີ້ຊື່ນາບານ, ເມຍຂອງລາວຊື່ອາ-
ບີກາຍ ຍິງຄົນນີ້ເປັນຄົນງາມ ແລະສະຫລາດ ແຕ່ຜົວຂອງນາງເປັນຄົນໃຈແຂງກະດ້າງ ແລະ
ປະພຶດຕົວຊົ່ວຊ້າ ລາວເປັນຄົນເຊື້ອສາຍຂອງກາເລັບ.

[4]ດາວິດຢູ່ໃນຖິ່ນແຫ້ງແລ້ງກັນດານ ເມື່ອໄດ້ຍິນຂ່າວວ່ານາບານກຳລັງຕັດຂົນແກະຂອງລາວ

ຢູ່ 5ດາວິດຈຶ່ງໃຊ້ຊາຍໜຸ່ມສິບຄົນ ແລະສັ່ງຊາຍໜຸ່ມເຫລົ່ານັ້ນວ່າ "ຈົ່ງຂຶ້ນໄປທີ່ກາເມນໄປຫາ
ນາບານ ແລະຄຳນັບລາວໃນນາມຂອງເຮົາ 6ແລະທ່ານທັງຫລາຍຈົ່ງກ່າວຄຳຄຳນັບລາວດັ່ງນີ້
'ຊີວິດທີ່ຍືນຍາວຈົ່ງມີແກ່ທ່ານ ຄວາມສະຫງົບສຸກຈົ່ງມີແກ່ທ່ານແລະຄອບຄົວຂອງທ່ານ ແລະ
ແກ່ບັນດາສິ່ງຂອງທີ່ທ່ານມີຢູ່ 7ຂ້າພະເຈົ້າໄດ້ຍິນວ່າທ່ານມີຄົນທີ່ຕັດຂົນແກະ: ຝ່າຍຜູ້ລ້ຽງແກະ
ຂອງທ່ານນັ້ນຢູ່ກັບພວກເຮົາ; ພວກເຮົາບໍ່ໄດ້ເຮັດອັນຕະລາຍແກ່ພວກເຂົາເລີຍ ແລະວັດຖຸສິ່ງ
ຂອງຂອງພວກເຂົາບໍ່ໄດ້ສູນເສຍຫຍັງໝົດ, ຕະຫລອດເວລາທີ່ພວກເຂົາອາໃສຢູ່ໃນກາເມນ
8ຂໍເຊີນທ່ານຖາມຄົນໜຸ່ມຂອງທ່ານເບິ່ງກໍໄດ້ ພວກເຂົາຈະບອກໃຫ້ທ່ານຮູ້ຈັກ ເພາະສະນັ້ນ ຂໍ
ໃຫ້ຄົນໜຸ່ມຂອງຂ້າພະເຈົ້າໄດ້ຮັບຄວາມກະລຸນາໃນສາຍຕາຂອງທ່ານ ເພາະພວກເຮົາໄດ້ມາໃນ
ມື້ສັນວັນດີ ຂໍທ່ານໂຜດເອົາສິ່ງທີ່ທ່ານມີຢູ່ນັ້ນໃຫ້ແກ່ພວກ ຜູ້ຮັບໃຊ້ຂອງທ່ານເທີ້ນ ແລະແກ່ດາ-
ວິດ ລູກຂອງທ່ານ.'"

9ເມື່ອພວກຄົນໜຸ່ມຂອງ ດາວິດ ໄດ້ມາຮອດກໍກ່າວບັນດາຄຳເຫລົ່ານັ້ນແກ່ ນາບານ ໃນນາມ
ຂອງ ດາວິດ ແລະພວກເຂົາມິດລໍຖ້າຢູ່ 10ແລະ ນາບານ ໄດ້ຕອບຄົນຮັບໃຊ້ຂອງ ດາວິດ ວ່າ
"ດາວິດຄືຜູ້ໃດ ແລະລູກຂອງເຢຊີຄືຜູ້ໃດ? ສະໄໝນີ້ມີຄົນໃຊ້ ເປັນຈຳນວນຫລາຍທີ່ໂຕນໜີ
ຈາກນາຍຂອງຕົນ 11ສົມຄວນບໍທີ່ຂ້ອຍຈະເອົາເຂົ້າຈີ່, ນໍ້າ ແລະເນື້ອສັດຂອງຂ້ອຍ ທີ່ຂ້ອຍໄດ້
ຂ້າສຳລັບຄົນຕັດຂົນແກະຂອງຂ້ອຍນັ້ນມອບໃຫ້ແກ່ຄົນຊຶ່ງມາຈາກບ່ອນທີ່ຂ້ອຍບໍ່ຮູ້ຈັກນັ້ນ?"

12ພວກຄົນໜຸ່ມຂອງ ດາວິດ ກໍກັບຄືນເມືອ ແລະບອກເລື່ອງລາວທັງໝົດແກ່ ດາວິດ ຟັງ
13ແລ້ວ ດາວິດ ໄດ້ສັ່ງຄົນຂອງຕົນວ່າ "ທຸກຄົນຈົ່ງເອົາດາບຄາດແອວໄວ້" ແລະທຸກຄົນກໍເອົາ
ດາບຄາດແອວຂອງ ຕົນ ແລະດາວິດກໍເອົາດາບຄາດແອວຄືກັນ, ມີຄົນຕິດຕາມດາວິດໄປປະ-
ມານສີ່ຮ້ອຍຄົນສ່ວນອີກສອງຮ້ອຍຄົນນັ້ນ ໃຫ້ເຝົ້າເຄື່ອງ.

14ແຕ່ມີຄົນໜຸ່ມຄົນໜຶ່ງໄປບອກນາງ ອາບີກາຍ ເມຍຂອງ ນາບານ ວ່າ "ເບິ່ງແມ, ດາວິດສົ່ງຜູ້
ສົ່ງຂ່າວມາຈາກຖິ່ນແຫ້ງແລ້ງກັນດານເພື່ອຈະຄຳນັບນາຍຂອງພວກເຮົາ ແລະນາຍໄດ້ເວົ້າຮ້າຍ
ຕໍ່ຄົນເຫລົ່ານັ້ນ 15ແຕ່ຄົນເຫລົ່ານັ້ນເຮັດການດີຕໍ່ພວກເຮົາຫລາຍ ແລະບໍ່ມີໃຜລົບກວນພວກເຮົາ
ແລະສິ່ງຂອງຕ່າງໆກໍບໍ່ໄດ້ສູນເສຍໃນລະຫວ່າງທີ່ພວກເຮົາຢູ່ຮ່ວມກັບພວກເຂົາໃນທົ່ງນາ.
16ພວກເຂົາເປັນຄືກັບກຳແພງຂອງພວກເຮົາທັງກາງເວັນແລະກາງຄືນຕະຫລອດເວລາທີ່ພວກ
ເຮົາລ້ຽງແກະຢູ່ກັບ ພວກເຂົາ. 17ບັດນີ້ ຂໍທ່ານຮັບຮູ້ເລື່ອງນີ້ ແລະຕັດສິນວ່າຍານາງຄວນຈະ
ເຮັດຢ່າງໃດ? ເພາະພວກເຂົາຄົງມຸ້ງຮ້າຍຕໍ່ນາຍຂອງ ພວກເຮົາ ແລະຕໍ່ຄອບຄົວນາຍທັງໝົດກໍ
ໄດ້ ນາຍນັ້ນເປັນຄົນຮ້າຍຫລາຍໃຜຈະເວົ້ານຳເພິ່ນກໍບໍ່ໄດ້."

18ແລ້ວນາງ ອາບີກາຍ ຟ້າວຈັດເອົາເຂົ້າຈີ່ສອງຮ້ອຍກ້ອນ; ນໍ້າອະງຸ່ນສອງຖົງໜັງ ແລະແກະ
ທີ່ເຜົາແລ້ວຫ້າໂຕ; ເຂົ້າຂົ້ວຫ້າຖັງ; ອະງຸ່ນແຫ້ງຮ້ອຍມັດ ແລະຂະໜົມໝາກເດື່ອສອງຮ້ອຍແຜ່ນ
ບັນທຸກໃສ່ເທິງຫລັງລໍໄປ 19ນາງກໍສັ່ງຄົນຮັບໃຊ້ຂອງນາງວ່າ "ຈົ່ງຮີບໄປກ່ອນຂ້ອຍ ແລະຂ້ອຍ
ຈະຕາມຫລັງພວກເຈົ້າໄປ" ແຕ່ນາງບໍ່ໄດ້ບອກນາບານຜົວຂອງນາງ.

20ຂະນະທີ່ນາງກຳລັງຂີ່ລໍລົງມາຕາມຮ່ອມພູ ເບິ່ງແມ, ດາວິດກັບຄົນຂອງທ່ານກໍພວມລົງ
ມາຕາມທາງຕໍ່ໜ້ານາງ ແລະນາງກໍໄດ້ພົບພວກເຂົາ 21ແຕ່ກ່ອນ ດາວິດ ໄດ້ກ່າວໄວ້ແລ້ວວ່າ

“ຂ້ອຍໄດ້ປົກປ້ອງຮັກສາທຸກສິ່ງທີ່ຄົນນີ້ມີຢູ່ໃນຖິ່ນແຫ້ງແລ້ງກັນດານ, ບໍ່ມີສິ່ງໃດເສຍຫາຍໄປ
ເລີຍ ແລະລາວຍັງເຮັດຊົ່ວຕໍ່ຂ້ອຍເພື່ອຕອບແທນຄວາມດີຫວະ. 22ຕັ້ງແຕ່ນີ້ຈົນຮອດຮຸ່ງເຊົ້າ ຖ້າ
ຂ້ອຍຍັງປ່ອຍໃຫ້ພວກເຂົາຄົນດຽວເຫຼືອຢູ່ ຂໍໃຫ້ພຣະເຈົ້າເຮັດຢ່າງນັ້ນແກ່ພວກສັດ ຕູຂອງດາ-
ວິດ ແລະໜັກໄປກວ່ານັ້ນອີກເທີ້ນ.”
23ເມື່ອນາງອາບີກາຍເຫັນດາວິດ ນາງກໍຟ້າວລົງຈາກຫລັງລໍກົ້ມໜ້າລົງຕໍ່ໜ້າດາວິດ ແລະ
ຂາບລົງດິນ 24ນາງຂາບລົງທີ່ຕີນຂອງດາວິດ ແລະກ່າວວ່າ “ຂໍໃຫ້ຍິງຜູ້ຮັບໃຊ້ຂອງທ່ານໄດ້
ເວົ້າໃຫ້ທ່ານຟັງ ແລະຂໍທ່ານໄດ້ໂຜດຟັງສຽງຂອງຍິງຜູ້ຮັບໃຊ້ຂອງທ່ານເທີ້ນ, ເຈົ້ານາຍຂອງ
ຂ້ານ້ອຍເອີຍ (ຂໍໃຫ້ຂ້ານ້ອຍຖືກໂທດແຕ່ຜູ້ດຽວ) ຄວາມຊົ່ວຊ້ານັ້ນ ຢູ່ທີ່ຂ້ານ້ອຍແຕ່ຜູ້ດຽວ 25ຂໍ
ເຈົ້ານາຍຂອງຂ້ານ້ອຍຢ່າໄດ້ເອົາຄວາມກັບຊາຍອັນທະພານຄົນນີ້ເລີຍ ເພາະລາວເປັນຄືກັບຊື່
ຂອງລາວ ນາບານເປັນຊື່ຂອງລາວ ແລະຄວາມໂງ່ຈ້າກໍຢູ່ກັບລາວ ແຕ່ຂ້ານ້ອຍເປັນຜູ້ຮັບໃຊ້
ຍິງຂອງທ່ານບໍ່ໄດ້ເຫັນພວກ ຄົນໜຸ່ມຂອງເຈົ້ານາຍຊຶ່ງເຈົ້ານາຍໄດ້ໃຊ້ໄປນັ້ນ.
26ດັ່ງນັ້ນ, ບັດນີ້ເຈົ້ານາຍຂອງຂ້ານ້ອຍເອີຍ ພຣະຜູ້ເປັນເຈົ້າຊົງພຣະຊົນຢູ່ ແລະຈິດໃຈຂອງ
ທ່ານກໍມີຊີວິດຢູ່ດ້ວຍວ່າ ພຣະຜູ້ເປັນເຈົ້າຫ້າມທ່ານຈາກການເຮັດໃຫ້ຄົນເລືອດຕົກ ແລະຈາກ
ການແກ້ແຄ້ນດ້ວຍມືຂອງທ່ານເອງ ເພາະສະນັ້ນ ຂໍໃຫ້ສັດຕູຂອງທ່ານ ແລະບັນດາຜູ້ທີ່ເຮັດ
ຮ້າຍຕໍ່ເຈົ້ານາຍຂອງຂ້ານ້ອຍຈົ່ງເປັນຄືນາບານ 27ດຽວນີ້ ຍິງຜູ້ຮັບໃຊ້ຂອງທ່ານໄດ້ນຳເອົາ
ເຄື່ອງຖວາຍເຫລົ່ານີ້ມາມອບໃຫ້ເຈົ້ານາຍ, ເພື່ອທ່ານຈະໄດ້ແຈກຢາຍ ໃຫ້ແກ່ບັນດາຄົນໜຸ່ມທີ່
ຕິດຕາມເຈົ້ານາຍຂອງຂ້ານ້ອຍ 28ຂໍໄດ້ໂຜດອະໄພການລະເມີດຂອງຍິງຜູ້ຮັບໃຊ້ຂອງທ່ານເທີ້ນ:
ເພາະ ພຣະຜູ້ເປັນເຈົ້າ ຈະ ເຮັດ ໃຫ້ ເຈົ້ານາຍ ຂອງ ຂ້ານ້ອຍ ເປັນ ຄອບຄົວທີ່ໝັ້ນຄົງຢ່າງ ແນ່ນອນ,
ດ້ວຍວ່າເຈົ້ານາຍຂອງຂ້ານ້ອຍເຮັດສົງຄາມຝ່າຍພຣະຜູ້ເປັນເຈົ້າ ຕາບໃດທີ່ທ່ານມີຊີວິດຢູ່ຈະ
ຫາຄວາມຊົ່ວກໍບໍ່ທ່ອນເຫັນໃນຕົວທ່ານຈັກເທື່ອ. 29ເຖິງແມ່ນມີຄົນລຸກຂຶ້ນໄລ່ຕິດຕາມທ່ານ ແລະ
ຊອກຫາທີ່ຈະຂ້າຊີວິດຂອງທ່ານ ແຕ່ຊີວິດຂອງເຈົ້ານາຍຂອງຜູ້ຂ້າ ຈະຜູກມັດຢູ່ກັບກຸ່ມຄົນທີ່ມີ
ຊີວິດຢູ່ໃນ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງທ່ານ ແລະ ພຣະເຈົ້າ ຈະ ເອົາຊີວິດສັດຕູຂອງທ່ານ
ແກວ່ງອອກໄປດ້ວຍສາຍແກວ່ງ.[ກ] 30ແລະຕໍ່ມາ ເມື່ອພຣະຜູ້ເປັນເຈົ້າຈະເຮັດການດີທຸກຂໍ້ແກ່
ເຈົ້ານາຍຂອງຂ້ານ້ອຍຕາມພຣະອົງໄດ້ບອກໄວ້ແລ້ວ ແລະຕັ້ງທ່ານໄວ້ໃຫ້ເປັນເຈົ້ານາຍປົກຄອງ
ເໜືອຊາວອິສຣາເອນ 31ເຫດການນີ້ຈະບໍ່ເຮັດໃຫ້ເຈົ້ານາຍຂອງຂ້ານ້ອຍຂຸ່ນສະດຸດ ເພາະໄດ້
ເຮັດໃຫ້ເລືອດພວກເຂົາຕົກໂດຍບໍ່ມີເຫດຜົນຫລື ເຈົ້ານາຍຂອງຂ້ານ້ອຍເຮັດການແກ້ແຄ້ນດ້ວຍ
ຕົນເອງ ແລະເມື່ອພຣະຜູ້ເປັນເຈົ້າເຮັດຄວາມດີແກ່ເຈົ້ານາຍຂອງຂ້ານ້ອຍ ແລ້ວກໍຂໍລະນຶກເຖິງ
ຍິງຜູ້ຮັບໃຊ້ຂອງທ່ານດ້ວຍເທີ້ນ.”
32ດາວິດຈຶ່ງກ່າວແກ່ອາບີກາຍວ່າ “ສັນລະເສີນພຣະຜູ້ເປັນເຈົ້າພຣະເຈົ້າຂອງຊາວອິສຣາ-
ເອນຜູ້ໄດ້ໃຊ້ເຈົ້າມາພົບກັບຂ້ອຍໃນມື້ນີ້ 33ຄວາມຄິດເຫັນຂອງເຈົ້າກໍເປັນພຣະພອນ ແລະຂໍໃຫ້
ຕົວເຈົ້າໄດ້ຮັບພຣະພອນເພາະເຈົ້າໄດ້ປ້ອງກັນເຮົາໃນມື້ນີ້ໃຫ້ພົ້ນຈາກການເຮັດໃຫ້ຄົນເລືອດຕົກ
ແລະຈາກການແກ້ແຄ້ນດ້ວຍມືຂອງເຮົາເອງ 34ເພາະພຣະຜູ້ເປັນເຈົ້າພຣະເຈົ້າຂອງອິສຣາເອນ

[ກ]ສາຍແກວ່ງ: ສະຫລິງ, ພາສາອັງກິດ sling

ຫ້າມເຮົາຈາກການທຳຮ້າຍພວກເຈົ້ານັ້ນກໍຊົງພະຊົນຢູ່, ຖ້າເຈົ້າບໍ່ໄດ້ຟ້າວມາພົບເຮົາ ມື້ອື່ນເຊົ້າ
ຈະບໍ່ມີຫຍັງເຫລືອແກ່ນາບານ ແມ່ນແຕ່ຊາຍຄົນໜຶ່ງ” [35]ແລ້ວດາວິດກໍຮັບບັນດາສິ່ງຂອງທີ່ນາງ
ໄດ້ນຳມາຈາກມືຂອງນາງ ແລະດາວິດກ່າວແກ່ນາງວ່າ “ຈົ່ງກັບເມືອບ້ານ ເຮືອນຂອງເຈົ້າດ້ວຍ
ສັນຕິສຸກສາ, ເຮົາໄດ້ຟັງສຽງຂອງເຈົ້າແລ້ວ ແລະເຮົາກໍຍອມຮັບຄຳຂອງເຈົ້າ.”
[36]ແລະອາບີກາຍກໍກັບໄປຫານາບານ ແລະເບິ່ງແມ, ເພິ່ນກຳລັງມີການກິນລ້ຽງໃຫຍ່ໃນ
ເຮືອນຂອງຕົນຄືກັບງານກິນລ້ຽງຂອງກະສັດ ແລະຈິດໃຈຂອງນາບານກໍຊື່ນບານຍິນດີຢູ່ເພາະ
ເພິ່ນມືນເມົາຫລາຍ ນາງຈຶ່ງບໍ່ໄດ້ບອກຫຍັງໃຫ້ທ່ານຮູ້ ບໍ່ວ່າຫລາຍ ຫລືໜ້ອຍຈົນຮອດຮຸ່ງເຊົ້າ
[37]ເມື່ອຕື່ນເຊົ້າຂຶ້ນມາ ເຫລົ້າອະງຸ່ນກໍເຫີຍໄປຈາກນາບານ ແລ້ວເມຍຂອງເພິ່ນກໍເລົ່າເຫດການ
ເຫລົ່ານັ້ນໃຫ້ຟັງ ແລະພາຍໃນຕົວທ່ານກໍໄດ້ຕາຍໄປກາຍເປັນຄືກັບຫີນກ້ອນໜຶ່ງ [38]ແລະຢູ່ມາ
ອີກປະມານສິບມື້ ພຣະຜູ້ເປັນເຈົ້າກໍໄດ້ປະຫານຊີວິດຂອງນາບານ ແລະເພິ່ນກໍສິ້ນຊີວິດ.

## ດາວິດແຕ່ງງານກັບນາງອາບີກາຍ ແລະນາງອາຮີໂນອາມ

[39]ເມື່ອດາວິດໄດ້ຍິນວ່ານາບານສິ້ນຊີວິດແລ້ວ ເພິ່ນໄດ້ກ່າວວ່າ “ສັນລະເສີນພຣະຜູ້ເປັນ-
ເຈົ້າຜູ້ຊົງໄດ້ແກ້ແຄ້ນຕໍ່ຄຳຢຽດຢາມທີ່ຂ້າພະອົງໄດ້ຮັບຈາກມືຂອງນາບານ ແລະປ້ອງກັນຜູ້ຮັບ
ໃຊ້ຂອງພຣະອົງບໍ່ໃຫ້ເຮັດຄວາມຊົ່ວ ພຣະຜູ້ເປັນເຈົ້າຕອບແທນການກະທຳຊົ່ວຂອງນາບານ
ໂດຍໃຫ້ຕົກລົງເທິງຫົວຂອງລາວເອງ” ແລ້ວດາວິດກໍສົ່ງຄົນໄປສູ່ຂໍນາງອາບີກາຍມາເປັນເມຍ
ຂອງຕົນ.
[40]ແລະພວກຜູ້ຮັບໃຊ້ຂອງດາວິດໄດ້ໄປຫາອາບີກາຍທີ່ກາເມນ ພວກເຂົາໄດ້ເວົ້າກັບນາງ
ວ່າ “ດາວິດໄດ້ໃຫ້ ພວກເຮົາມາຫານາງ ເພື່ອຈະເອົານາງໄປເປັນເມຍຂອງເພິ່ນ” [41]ແລະນາງກໍ
ລຸກຂຶ້ນໝູບໜ້າລົງເຖິງດິນກ່າວວ່າ “ເບິ່ງແມ, ຍິງຜູ້ຮັບໃຊ້ຂອງເພິ່ນພ້ອມແລ້ວທີ່ຈະເປັນຜູ້ຮັບໃຊ້
ແລະພ້ອມແລ້ວທີ່ຈະລ້າງຕີນໃຫ້ແກ່ພວກຜູ້ຮັບໃຊ້ຂອງເຈົ້ານາຍຂອງຂ້ານ້ອຍ” [42]ອາບີກາຍກໍ
ຟ້າວລຸກຂຶ້ນຂີ່ລໍໂຕໜຶ່ງພ້ອມກັບສາວໃຊ້ທີ່ບົວລະບັດນາງຫ້າຄົນ, ນາງໄດ້ຕາມຜູ້ສົ່ງຂ່າວຂອງ
ດາວິດໄປ ແລະໄດ້ເປັນເມຍຂອງດາວິດ.
[43]ດາວິດຍັງໄດ້ຮັບນາງອາຮີໂນອາມຊາວເຢດຊະເຣເອນມານຳ ແລະທັງສອງກໍເປັນເມຍ
ຂອງເພິ່ນ [44]ມີການ ລາຊະທິດາຂອງຊາອູນ ຜູ້ເປັນເມຍຂອງດາວິດ ຊາອູນໄດ້ຍົກໃຫ້ແກ່ປັນ
ທີລູກຊາຍລາອິດຊາວກັນລິມ.

# ບົດທີ 26

## ດາວິດປະຕິເສດບໍ່ຍອມຂ້າຊາອູນ

[1]ຊາວຊີເຟໄດ້ພາກັນມາຫາຊາອູນທີ່ເມືອງກິເບອາທູນວ່າ “ດາວິດໄດ້ລີ້ຕົວຢູ່ເທິງພູນ້ອຍ
ຮາກີລາຊຶ່ງຢູ່ຕໍ່ໜ້າຖິ່ນກັນດານບໍ່ແມ່ນບໍ?” [2]ຊາອູນໄດ້ລົງໄປທີ່ຖິ່ນແຫ້ງແລ້ງກັນດານຊີເຟ
ພ້ອມກັບທະຫານທີ່ເກັ່ງກ້າ ຊາວອິສຣາເອນທີ່ຄັດເລືອກໄວ້ແລ້ວສາມພັນຄົນ ເພື່ອອອກຊອກ
ຫາດາວິດໃນຖິ່ນແຫ້ງແລ້ງກັນດານຊີເຟ [3]ແລະຊາອູນຕັ້ງຄ້າຍຢູ່ທີ່ພູນ້ອຍຮາກີລາຢູ່ໃກ້ຖະໜົນ
ຊຶ່ງຢູ່ຕໍ່ໜ້າຖິ່ນກັນດານ; ແຕ່ດາວິດຍັງຄົງຢູ່ໃນຖິ່ນແຫ້ງແລ້ງກັນດານ ແລະຮູ້ວ່າຊາອູນສະເດັດ

ມາຊອກຫາຕົນໃນຖິ່ນແຫ້ງແລ້ງກັນດານ [4]ດັ່ງນັ້ນ ດາວິດຈຶ່ງສົ່ງຜູ້ສອດແນມອອກໄປ ຈຶ່ງຮູ້ວ່າ
ຊາອູນມາແທ້.

[5]ແລ້ວ ດາວິດກໍອອກໄປຫາບ່ອນທີ່ຊາອູນ ຕັ້ງຄ້າຍພັກຢູ່ ແລະເຫັນບ່ອນນອນຂອງຊາອູນ
ແລະຊາອູນ ກຳລັງນອນຫລັບຢູ່ກັບ ອັບເນ ລູກຊາຍຂອງ ເນ ຫົວໜ້າກອງທັບຂອງຕົນ; ຊາອູນ
ບັນທົມຢູ່ກາງບໍລິເວນຄ້າຍ ຝ່າຍກອງທະຫານ ກໍຕັ້ງຄ້າຍຢູ່ອ້ອມຮອບພະອົງ. [6]ແລ້ວ ດາວິດກໍ
ເວົ້າກັບ ອາຮີເມເລັກ ຄົນ ຮິດຕີ ແລະ ອາບີຊາຍ ລູກຊາຍຂອງນາງ ເຊຣູຢາ ນ້ອງຊາຍຂອງ ໂຢ-
ອາບ ວ່າ "ຜູ້ໃດຈະລົງໄປໃນຄ້າຍຂອງຊາອູນນຳເຮົາ" ອາບີຊາຍ ຕອບວ່າ "ຂ້າພະເຈົ້າຈະລົງ
ໄປກັບທ່ານ."

[7]ດາວິດ ແລະ ອາບີຊາຍ ຈຶ່ງເຂົ້າໄປໃນຄ້າຍພັກຂອງຊາອູນ ໃນເວລາກາງຄືນ ແລະເບິ່ງແມ,
ຊາອູນ ກຳລັງນອນຢູ່ໃຈກາງບໍລິເວນຄ້າຍ; ຫອກຂອງພະອົງປັກຢູ່ດິນຊື່ກັບຫົວຂອງເພິ່ນ, ອັບ-
ເນ ກັບພວກປະຊາຊົນກໍນອນອ້ອມພະອົງຢູ່ [8]ອາບີຊາຍ ເວົ້າກັບ ດາວິດ ວ່າ" ໃນມື້ນີ້ ພຣະເຈົ້າ
ມອບສັດຕູຂອງທ່ານໄວ້ໃນມືຂອງທ່ານແລ້ວ ບັດນີ້ຂໍໃຫ້ຂ້າພະເຈົ້າເອົາຫອກຂອງເພິ່ນແທງໃຫ້
ຊອດຕິດກັບດິນບາດດຽວເທົ່ານັ້ນ ແລະຂ້າພະເຈົ້າຈະບໍ່ແທງເທື່ອທີສອງດອກ."

[9]ແຕ່ດາວິດບອກອາບີຊາຍວ່າ "ຂໍຢ່າເຮັດຮ້າຍພະອົງເລີຍ ເພາະມີຜູ້ໃດທີ່ຈະຢຽດມືອອກຕໍ່ສູ້
ຜູ້ຊຶ່ງ ພຣະຜູ້ເປັນເຈົ້າ ໄດ້ຊົງເຈີມໄວ້ແລ້ວ ໂດຍປາດສະຈາກຄວາມຜິດ?" [10]ແລະ ດາວິດ ກ່າວ
ວ່າ "ພຣະຜູ້ເປັນເຈົ້າ ມີຊີວິດຢູ່ແນ່ແທ້ສັນໃດ ພຣະຜູ້ເປັນເຈົ້າ ຈະຂ້າເພິ່ນດ້ວຍຕົວເພິ່ນເອງສັນ-
ນັ້ນ ຫລືຈະຮອດມື້ກຳນົດທີ່ພະອົງຕ້ອງສິ້ນພະຊົນ ຫລືພະອົງຈະສະເດັດເຂົ້າສົງຄາມແລ້ວຖືກ
ຂ້າ [11]ຂໍ ພຣະຜູ້ເປັນເຈົ້າ ຢ່າໄດ້ຢຽດມືອອກຕໍ່ສູ້ຜູ້ທີ່ ພຣະຜູ້ເປັນເຈົ້າ ຊົງເຈີມໄວ້ ບັດນີ້ຈົ່ງເອົາ
ຫອກທີ່ຢູ່ໃກ້ຫົວເພິ່ນກັບເຕົ້ານ້ຳ ແລະໃຫ້ເຮົາທັງສອງໜີໄປສາ" [12]ດາວິດ ຈຶ່ງເອົາຫອກ ແລະ
ເຕົ້ານ້ຳໃກ້ຫົວຂອງ ຊາອູນ ໄປແລະພວກເຂົາທັງສອງກໍອອກໄປໂດຍບໍ່ມີໃຜເຫັນ ແລະບໍ່ມີໃຜຮູ້
ແລະບໍ່ມີຄົນໃດຕື່ນ ເພາະພວກເຂົາຫລັບສະນິດໝົດທຸກຄົນ ເພາະ ພຣະຜູ້ເປັນເຈົ້າ ຊົງບັນດານ
ໃຫ້ພວກເຂົາທຸກຄົນຫລັບສະນິດ.

[13]ແລະ ດາວິດກໍຂ້າມໄປອີກຟາກໜຶ່ງ ໄປຢືນຢູ່ເທິງຍອດພູທີ່ໄກອອກໄປ ຊຶ່ງມີພື້ນທີ່ຫວ່າງ
ກວ້າງໃຫຍ່ລະຫວ່າງທັງສອງຝ່າຍ [14]ດາວິດ ຮ້ອງໃສ່ພວກປະຊາຊົນ ແລະເອີ້ນ ອັບເນ ລູກຊາຍ
ຂອງ ເນ ວ່າ "ອັບເນ ເອີຍ ທ່ານບໍ່ຕອບບໍ?" ແລ້ວ ອັບເນ ຕອບວ່າ "ແມ່ນຜູ້ໃດທີ່ມາຮ້ອງຫາກະ-
ສັດ?" [15]ແລະ ດາວິດ ຕອບ ອັບເນ ວ່າ "ທ່ານບໍ່ແມ່ນຜູ້ຊາຍທີ່ເກັ່ງກ້າດອກຫລືໃນ ອິສຣາເອນ ມີ
ໃຜທຽບເທົ່າກັບທ່ານໄດ້ ເປັນຫຍັງທ່ານບໍ່ເຝົ້າກະສັດ ເຈົ້ານາຍຂອງທ່ານໄວ້ໃຫ້ດີເພາະມີຄົນໜຶ່ງ
ເຂົ້າໄປເພື່ອຈະທຳລາຍກະສັດ ເຈົ້ານາຍຂອງເຈົ້າ [16]ການທີ່ທ່ານເຮັດເຊັ່ນນີ້ບໍ່ດີເລີຍ ພຣະຜູ້-
ເປັນເຈົ້າ ຊົງພຣະຊົນຢູ່ຢ່າງແທ້ຈິງສັນໃດ ທ່ານສົມຄວນຕາຍເພາະທ່ານບໍ່ໄດ້ເຝົ້າເຈົ້ານາຍຂອງ
ທ່ານໄວ້ໃຫ້ດີ ຊຶ່ງເປັນຜູ້ທີ່ ພຣະຜູ້ເປັນເຈົ້າ ຊົງເຈີມໄວ້; ບັດນີ້ຈົ່ງກວດເບິ່ງວ່າຫອກຂອງກະສັດຢູ່
ໃສ ແລະເຕົ້ານ້ຳທີ່ໃກ້ຫົວນັ້ນ ດຽວນີ້ຢູ່ໃສ?"

[17]ຊາອູນ ຈື່ສຽງຂອງ ດາວິດ ໄດ້ຈຶ່ງກ່າວວ່າ "ດາວິດ ລູກຂອງເຮົາເອີຍ ນີ້ແມ່ນສຽງຂອງເຈົ້າ
ບໍ?" ແລະ ດາວິດ ຕອບວ່າ "ຂ້າແດ່ກະສັດ ເຈົ້ານາຍຂອງຂ້າພະອົງ ແມ່ນສຽງຂ້າພະອົງເອງ"

[18]ແລະເພິ່ນກ່າວຕໍ່ໄປວ່າ "ເຫດໃດເຈົ້ານາຍຂອງຂ້າພະອົງຈຶ່ງໄລ່ຕິດຕາມຜູ້ຮັບໃຊ້ຂອງພະອົງ,
ຂ້າພະອົງໄດ້ເຮັດ ຫຍັງ; ມືຂອງຂ້າພະອົງໄດ້ເຮັດຜິດໃນສິ່ງໃດບໍ? [19]ເພາະສະນັ້ນ ບັດນີ້ຂໍກະ-
ສັດຜູ້ເປັນເຈົ້ານາຍຂອງຂ້າພະອົງ ຈົ່ງຟັງສຽງຜູ້ຮັບໃຊ້ຂອງພຣະອົງ ຖ້າພຣະຜູ້ເປັນເຈົ້າໃຫ້ພະ
ອົງຕໍ່ສູ້ຂ້າພະອົງແລ້ວ ຂໍພຣະຜູ້ເປັນເຈົ້າໂຜດຮັບເອົາເຄື່ອງຖວາຍບູຊາໜຶ່ງໂຕ ຖ້າແມ່ນລູກ
ທັງຫລາຍຂອງມະນຸດຍຸຍົງ ຂໍໃຫ້ຄົນນັ້ນຖືກສາບແຊ່ງຕໍ່ພຣະພັກພຣະຜູ້ເປັນເຈົ້າ ເພາະລາວໄດ້
ຂັບໄລ່ຂ້າພະອົງອອກໄປໃນມື້ນີ້ ເພື່ອບໍ່ໃຫ້ຂ້າພະອົງໄດ້ຮັບສ່ວນໃນມໍລະດົກຂອງ ພຣະຜູ້ເປັນ-
ເຈົ້າ ໂດຍໄດ້ກ່າວວ່າ 'ຈົ່ງໄປບົວລະບັດຮູບພະອື່ນເທີ້ນ' [20]ເພາະສະນັ້ນ ບັດນີ້ ຂໍຢ່າໃຫ້ເລືອດ
ຂອງຂ້າພະອົງຕົກເທິງດິນ ໂດຍຫ່າງໄກຈາກພຣະພັກພຣະຜູ້ເປັນເຈົ້າ ເພາະກະສັດຂອງອິ-
ສຣາເອນໄດ້ອອກໄປເພື່ອຈະຊອກຫາຊີວິດຂອງໝັດໂຕໜຶ່ງເໝືອນດັ່ງຈະໄລ່ຕິດຕາມນົກກະທາ
ໂຕໜຶ່ງຢູ່ເທິງພູເຂົາທັງຫຼາຍ."

[21]ແລ້ວຊາອູນກ່າວວ່າ "ຂ້ອຍໄດ້ເຮັດບາບແລ້ວ ດາວິດລູກຂອງເຮົາເອີຍ ຈົ່ງກັບມາສາ ເຮົາ
ຈະບໍ່ເຮັດຮ້າຍແກ່ ເຈົ້າອີກຕໍ່ໄປ ເພາະໃນມື້ນີ້ຊີວິດຂອງເຮົາກໍປະເສີດໃນສາຍຕາຂອງເຈົ້າ ເບິ່ງ
ແມ, ເຮົາໄດ້ສະແດງຕົວເປັນຄົນໂງ່ ແລະໄດ້ເຮັດຜິດຢ່າງໃຫຍ່ຫລວງ" [22]ແລ້ວດາວິດໄດ້ຕອບ
ແລະບອກວ່າ "ຂ້າແດ່ກະສັດ ເບິ່ງແມ, ຫອກຂອງກະສັດຢູ່ບ່ອນນີ້ ຂໍສັ່ງໃຫ້ຄົນໜຸ່ມຄົນ ໜຶ່ງ
ມາຮັບເອົາຫອກນີ້ໄປສາ [23]ພຣະຜູ້ເປັນເຈົ້າຈະຕອບແທນແກ່ທຸກຄົນຕາມຄວາມຊອບທຳ ແລະ
ຄວາມສັດຊື່ຂອງພວກເຂົາເອງ ເພາະໃນມື້ນີ້ ພຣະຜູ້ເປັນເຈົ້າໄດ້ມອບພະອົງໄວ້ໃນມືຂອງຂ້າ
ພຣະອົງແລ້ວ ແຕ່ຂ້າພຣະອົງບໍ່ໄດ້ຢຽດມືອອກຕໍ່ສູ້ຜູ້ທີ່ພຣະຜູ້ເປັນເຈົ້າຊົງເຈີມໄວ້ [24]ຊີວິດຂອງ
ພະອົງນັ້ນປະເສີດໃນສາຍຕາຂອງຂ້າພະອົງໃນມື້ນີ້ຢ່າງໃດ ຂໍໃຫ້ຊີວິດຂອງຂ້າພະອົງກໍປະເສີດ
ໃນສາຍພຣະເນດຂອງ ພຣະຜູ້ເປັນເຈົ້າຢ່າງນັ້ນ ແລະຂໍພຣະອົງຊ່ວຍຂ້າພະອົງໃຫ້ພົ້ນຈາກບັນ-
ດາຄວາມທຸກຍາກລຳບາກນາໆປະການ" [25]ແລ້ວຊາອູນຈຶ່ງກ່າວກັບດາວິດວ່າ "ດາວິດລູກ
ຂອງເຮົາເອີຍ ຈົ່ງຮັບພຣະພອນ ເຈົ້າຈະເຮັດສິ່ງທີ່ຍິ່ງໃຫຍ່ ແລະ ຈະສຳເລັດໂດຍແທ້" ແລະ
ດາວິດໄດ້ໄປຕາມທາງຂອງຕົນ ຝ່າຍຊາອູນກໍສະເດັດກັບສູ່ລາຊະສຳນັກຂອງພະອົງ.

# ບົດທີ 27

## ດາວິດໝົດຫວັງຈຶ່ງໜີໄປຢູ່ທີ່ແຜ່ນດິນຄົນຟີລິດສະຕິນ

[1]ດາວິດນຶກໃນໃຈວ່າ "ຂ້ອຍຄົງຈະພິນາດດ້ວຍມືຂອງຊາອູນມື້ໃດມື້ໜຶ່ງ ບໍ່ມີສິ່ງໃດດີສຳລັບ
ຂ້ອຍເວັ້ນແຕ່ຈະປົບໜີໄປຢູ່ແຜ່ນດິນຄົນຟີລິດສະຕິນໂດຍໄວ, ແລ້ວຊາອູນກໍຈະຢຸດຕິ ບໍ່ຕິດ-
ຕາມຂ້ອຍອີກໃນເຂດແດນອິສຣາເອນ ແລະ ຂ້ອຍຈະພົ້ນຈາກມືຂອງເພິ່ນໄດ້."

[2]ດາວິດຈຶ່ງຍົກຍ້າຍຂ້າມໄປຫາອາກີເຊລູກຊາຍມາໂອກກະສັດແຫ່ງເມືອງກັດທັງຕົວເພິ່ນ
ແລະຄົນທີ່ຢູ່ກັບເພິ່ນ ຫົກຮ້ອຍຄົນ [3]ດາວິດພ້ອມດ້ວຍພວກຂອງຕົນ ແລະຄອບຄົວຂອງພວກ
ເຂົາທຸກຄົນພ້ອມກັບເມຍສອງຄົນຂອງດາວິດ ຄື ອາຮີໂນອາມຊາວເຢດຊະເຣເອນ ແລະອາ-
ບີກາຍຊາວກາເມນ ແມ່ໝ້າຍຂອງນາບານ ໄດ້ອາໄສຢູ່ກັບອາກີເຊທີ່ເມືອງກັດ [4]ມີຄົນໄປທູນ
ຊາອູນວ່າ "ດາວິດໄດ້ໜີໄປເມືອງກັດ" ແລ້ວຊາອູນກໍບໍ່ໄດ້ຕິດຕາມຊອກຫາດາວິດອີກຕໍ່ໄປ.

5ແລ້ວ ດາວິດ ຈຶ່ງທູນ ອາກີເຊ ວ່າ “ຖ້າຂ້າພະອົງເປັນທີ່ພໍພະໄທໃນສາຍພະເນດຂອງພະອົງ ຂໍ
ໃຫ້ພວກເຂົາມອບບາງບ່ອນໃນຕົວເມືອງ ແກ່ຂ້າພະອົງຈັກແຫ່ງໜຶ່ງ ເພື່ອຂ້າພະອົງຈະໄດ້ອາໄສຢູ່
ໃນບ່ອນນັ້ນ ບໍ່ເໝາະສົມທີ່ຜູ້ຮັບໃຊ້ຂອງພະອົງຈະຢູ່ໃນ ເມືອງ ແຫ່ງກະສັດກັບພະອົງ” 6ນັບແຕ່ມື້
ນັ້ນມາ ອາກີເຊ ມອບ ເມືອງ ຊິກລັກ ໃຫ້ແກ່ ດາວິດ ດັ່ງນັ້ນ ເມືອງ ຊິກລັກ ຈຶ່ງ ເປັນ ເມືອງກະສັດ
ຂອງ ຢູດາ ຈົນຮອດທຸກມື້ນີ້. 7ໄລຍະເວລາທີ່ ດາວິດ ໄດ້ອາໄສຢູ່ໃນແຜ່ນດິນ ຟີລິດສະຕິນ ນັ້ນເປັນ
ເວລາໜຶ່ງປີກັບສີ່ເດືອນ.

8ຝ່າຍ ດາວິດ ກັບຄົນຂອງເພິ່ນກໍຂຶ້ນໄປບຸກໂຈມຕີຊາວ ເກຊູ, ຊາວ ກີຊີ ແລະຄົນ ອາມາເລັກ
ເພາະປະຊາຊາດເຫລົ່ານີ້ຢູ່ແຜ່ນດິນນັ້ນຕັ້ງແຕ່ສະໄໝບູຮານ (ເປັນເວລາດົນນານມາແລ້ວ) ດາ-
ວິດ ໂຈມຕີຈົນໄປຮອດ ເມືອງ ຊູເຣ ລົງໄປຫາ ແຜ່ນດິນ ເອຢິບ 9ດາວິດ ໄດ້ຕີຊະນະ ແຜ່ນດິນນັ້ນ
ໂດຍບໍ່ໄວ້ຊີວິດຜູ້ຊາຍຫລືຜູ້ຍິງ ແລະເພິ່ນໄດ້ປຸ້ນເອົາຝູງສັດນ້ອຍໃຫຍ່ ຝູງແກະ ງົວ ລາ ອູດ
ແລະເຄື່ອງນຸ່ງ ແລ້ວກັບມາຫາ ອາກີເຊ 10ອາກີເຊ ຖາມວ່າ “ມື້ນີ້ທ່ານບໍ່ໄດ້ໄປໂຈມຕີໃສບໍ?”
ດາວິດ ຕອບວ່າ “ໄດ້ໄປປຸ້ນທາງພາກໄຕ້ຂອງແຜ່ນດິນ ຢູດາ, ພວກ ເຢຣາເມເອນ ແລະພາກໃຕ້
ພວກ ເກນີ” 11ດາວິດ ບໍ່ໄດ້ໄວ້ຊີວິດຜູ້ຊາຍ ຫລືຜູ້ຍິງຈັກຄົນ ເພື່ອວ່າຈະບໍ່ມີຜູ້ໃດນຳຂ່າວມາທີ່
ເມືອງ ກັດ ເພື່ອບອກເລື່ອງລາວຂອງເຮົາ ແລະກ່າວວ່າ ‘ດາວິດ ໄດ້ເຮັດຢ່າງນີ້ຢ່າງນັ້ນ ແລະນີ້
ເປັນວິທີການທີ່ເພິ່ນໃຊ້ໃນຂະນະທີ່ອາໄສຢູ່ໃນແຜ່ນດິນ ຟີລິດສະຕິນ’” 12ອາກີເຊ ໄວ້ເນື້ອເຊື່ອໃຈ
ໃນ ດາວິດ ແລະໄດ້ກ່າວວ່າ “ລາວໄດ້ເຮັດໃຫ້ຊົນຊາດຂອງລາວຄືຊົນຊາດ ອິສຣາເອນ ກຽດຊັງ
ລາວທີ່ສຸດ ເພາະສະນັ້ນ ລາວຈະເປັນຜູ້ຮັບໃຊ້ຂອງເຮົາໄດ້ຕະຫລອດໄປ.”

# ບົດທີ 28

## ຄົນຂອງດາວິດເປັນທະຫານຍາມຮັກສາພະລາຊະວັງຂອງກະສັດອາກີເຊ

1ຢູ່ມາໃນຄາວນັ້ນ ຄົນ ຟີລິດສະຕິນ ໄດ້ທ້ອນໂຮມທະຫານ ເພື່ອເຮັດສົງຄາມສູ້ຮົບກັບ ອິສຣາ-
ເອນ ແລະ ອາກີເຊ ກ່າວກັບ ດາວິດ ວ່າ “ຈົ່ງເຂົ້າໃຈວ່າ ທ່ານ ແລະຄົນຂອງທ່ານຈະຕ້ອງອອກ
ສົງຄາມກັບເຮົາ” 2ດາວິດ ທູນ ອາກີເຊ ວ່າ “ແນ່ນອນ ທ່ານຈະໄດ້ຮູ້ວ່າຜູ້ຮັບໃຊ້ຂອງທ່ານສາ-
ມາດເຮັດໄດ້” ແລະ ອາກີເຊ ໄດ້ຕອບ ດາວິດ ວ່າ “ດີແລ້ວ ເຮົາຈະໃຫ້ທ່ານເປັນຜູ້ເຝົ້າປ້ອງກັນ
ຕົວຂອງເຮົາຕະຫລອດຊີວິດ.”

3ຝ່າຍ ຊາມູເອນ ໄດ້ສິ້ນຊີວິດ ແລ້ວ ແລະຊາວ ອິສຣາເອນ ທັງໝົດໄດ້ພາກັນໄວ້ທຸກໃຫ້ເພິ່ນ
ແລະຝັງສົບຂອງເພິ່ນໄວ້ໃນເມືອງ ຣາມາ ຊຶ່ງເປັນເມືອງຂອງເພິ່ນເອງ ແລະໃນສະໄໝນັ້ນ ຊາ-
ອູນ ໄດ້ຂັບໄລ່ໝໍເຢົາ ໝໍທຳນວຍທັງຫລາຍຈາກແຜ່ນດິນ 4ພວກ ຟີລິດສະຕິນ ໄດ້ເຕົ້າໂຮມກຳລັງ
ແລະຕັ້ງຄ້າຍພັກຢູ່ທີ່ ຊູເນມ ສ່ວນ ຊາອູນ ໄດ້ຮວບຮວມບັນດາຄົນ ອິສຣາເອນ ທັງໝົດ ແລະ
ພວກ ເຂົາ ໄດ້ຕັ້ງຄ້າຍພັກຢູ່ທີ່ ກິນໂບອາ 5ເມື່ອ ຊາອູນ ໄດ້ ເຫັນກອງທັບ ຂອງພວກ ຟີລິດສະຕິນ
ເພິ່ນກໍຢ້ານຫລາຍຈົນຕົວສັ່ນເຊັນ ແລະຈິດໃຈຂອງພະອົງກໍຫວັ່ນໄຫວຫລາຍ 6ແລະ ຊາອູນ ໄດ້
ທູນຖາມ ພຣະຜູ້ເປັນເຈົ້າ ແຕ່ ພຣະຜູ້ເປັນເຈົ້າ ບໍ່ໄດ້ຕອບເພິ່ນ ບໍ່ວ່າທາງຄວາມຝັນ ຫລືດ້ວຍ ອູ-

ຣິມ[ກ] ຫລືດ້ວຍຜູ້ປະກາດພຣະທຳ.

## ຊາອູນໄປຫາໝໍຜີທີ່ເອັນ-ໂດເຣ

7ຊາອູນຈຶ່ງສັ່ງພວກຂ້າລາຊະການນ້ອຍຂອງພະອົງວ່າ "ຈົ່ງອອກໄປຊອກຫາໝໍເຢົາຜູ້ຍິງເພື່ອ
ເຮົາຈະໄດ້ໄປປຶກສາຫາລື ແລະຖາມພວກເຂົາເບິ່ງ" ແລະພວກຂ້າໃຊ້ໄດ້ຕອບເພິ່ນວ່າ "ເບິ່ງແມ,
ມີຍິງໝໍເຢົາຄົນໜຶ່ງຢູ່ທີ່ ເອັນ-ໂດເຣ."
8ຊາອູນຈຶ່ງປອມຕົວ ແລະປ່ຽນເຄື່ອງນຸ່ງ ສະເດັດອອກໄປພ້ອມກັບຊາຍສອງຄົນເພື່ອໄປຫາ
ຍິງຄົນນັ້ນໃນເວລາກາງຄືນ ພະອົງກ່າວວ່າ "ຂໍທຳນວາຍໃຫ້ຂ້ອຍໂດຍວິນຍານຂອງຄົນຕາຍ
ແລະຂ້ອຍຈະອອກຊື່ຜູ້ໃດກໍໃຫ້ເອີ້ນຜູ້ນັ້ນຂຶ້ນມາ."
9ຍິງຄົນນັ້ນຈຶ່ງຕອບເພິ່ນວ່າ "ເບິ່ງແມ, ທ່ານກໍຮູ້ແລ້ວວ່າຊາອູນໄດ້ເຮັດຫຍັງ, ເພິ່ນໄດ້ຂັບໄລ່
ໝໍເຢົາ ແລະໝໍມໍອອກຈາກແຜ່ນດິນ, ເຫດສະນັ້ນ ເປັນຫຍັງທ່ານຈຶ່ງມາວາງກັບດັກໃສ່ຊີວິດ
ຂອງຂ້ອຍ ເພື່ອເຮັດໃຫ້ຂ້ອຍຕາຍໄປຊັ້ນບໍ?" 10ແຕ່ຊາອູນປະຕິຍານກັບຍິງນັ້ນໃນພຣະນາມ
ຂອງ ພຣະຜູ້ເປັນເຈົ້າ ວ່າ "ພຣະຜູ້ເປັນເຈົ້າ ມີຊີວິດຢູ່ສັນໃດ, ເຈົ້າຈະບໍ່ຖືກໂທດເພາະເລື່ອງນີ້
ສັນນັ້ນ" 11ແລະຍິງນັ້ນຈຶ່ງທູນຖາມວ່າ "ທ່ານຈະໃຫ້ຂ້າພະເຈົ້າເອີ້ນໃຜຂຶ້ນມາ" ຊາອູນກ່າວວ່າ
"ເອີ້ນຊາມູເອນຂຶ້ນມາໃຫ້ ຂ້ອຍ."
12ເມື່ອຍິງຄົນນັ້ນເຫັນຊາມູເອນຈຶ່ງຮ້ອງສຽງດັ່ງ ແລະຍິງນັ້ນເວົ້າກັບຊາອູນວ່າ "ເຫດໃດ
ທ່ານຈຶ່ງຫລອກລວງ ຂ້ານ້ອຍທ່ານຄືຊາອູນ" 13ກະສັດເວົ້າກັບແກ່ຍິງນັ້ນວ່າ "ຢ່າຢ້ານເລີຍ ແຕ່
ເຈົ້າໄດ້ເຫັນສິ່ງໃດ?" ແລະຍິງນັ້ນກາບທູນຊາອູນວ່າ" ຂ້ານ້ອຍເຫັນວິນຍານດວງໜຶ່ງສະເດັດ
ຂຶ້ນມາຈາກແຜ່ນດິນ" 14ເພິ່ນຖາມນາງວ່າ "ຮູບຮ່າງຂອງເພິ່ນເປັນຢ່າງໃດ?" ແລະນາງຕອບວ່າ
"ເປັນຜູ້ຊາຍເຖົ້າຂຶ້ນມາ ມີເສື້ອຄຸມ ກາຍຢູ່" ຊາອູນກໍຮູ້ວ່ານັ້ນເປັນຊາມູເອນ ເພິ່ນຈຶ່ງນ້ອມຕົວ
ລົງ ເຖິງດິນຂາບໄຫວ້ 15ແລ້ວ ຊາມູເອນ ເວົ້າກັບ ຊາອູນ ວ່າ "ເປັນຫຍັງ ເຈົ້າຈຶ່ງ ມາລົບກວນ
ຄວາມສຸກກະເສີມຂອງເຮົາ ເອີ້ນເຮົາຂຶ້ນມາ ເຮັດຫຍັງ" ຊາອູນຕອບວ່າ "ຂ້າພະເຈົ້າມີຄວາມ-
ທຸກຫລາຍ ເພາະພວກຟີລິດສະຕິນກຳລັງມາເຮັດສົງຄາມຕໍ່ສູ້ກັບຂ້າພະເຈົ້າ ແລະພຣະເຈົ້າຫັນ
ໜີຈາກຂ້າພະເຈົ້າໂດຍບໍ່ໄດ້ຕອບຂ້າພະເຈົ້າອີກເລີຍ ບໍ່ວ່າໂດຍຜ່ານທາງຜູ້ປະກາດພຣະທຳ ຫລື
ທາງຄວາມຝັນ ເພາະສະນັ້ນຂ້າພະເຈົ້າຈຶ່ງຂໍເອີ້ນທ່ານຂຶ້ນມາ ເພື່ອທ່ານຈະໄດ້ບອກວ່າຂ້າພະ-
ເຈົ້າຄວນຈະເຮັດປະການໃດດີ?"
16ແລະ ຊາມູເອນ ຕອບວ່າ "ເປັນຫຍັງທ່ານ ຈຶ່ງມາຖາມຂ້າພະເຈົ້າ ໃນ ເວລາ ພຣະຜູ້ເປັນເຈົ້າ
ຫັນໜີຈາກທ່ານ ແລະເປັນສັດຕູຂອງທ່ານ? 17ພຣະຜູ້ເປັນເຈົ້າ ໄດ້ເຮັດແກ່ທ່ານຄືກັບທີ່ພຣະອົງ
ໄດ້ບອກຜ່ານທາງຂ້າພະເຈົ້າໄວ້ແລ້ວນັ້ນ ຄື ພຣະຜູ້ເປັນເຈົ້າ ໄດ້ຍົກເອົາລາຊະອານາຈັກນັ້ນ
ອອກຈາກມືຂອງທ່ານ ແລະມອບໃຫ້ແກ່ຄົນໃກ້ຄຽງຂອງທ່ານ ຄືດາວິດ 18ເພາະທ່ານບໍ່ໄດ້ເຊື່ອ
ຟັງພຣະສຸລະສຽງຂອງ ພຣະຜູ້ເປັນເຈົ້າ ແລະບໍ່ໄດ້ປະຕິຕາມພຣະພິໂລດອັນແຮງກ້າຂອງພຣະ-
ອົງໃຫ້ສຳເລັດໃນການຕໍ່ສູ້ກັບພວກ ອາມາເລັກ. ເຫດສະນັ້ນ ພຣະຜູ້ເປັນເຈົ້າ ຈຶ່ງເຮັດສິ່ງນີ້ແກ່
ທ່ານໃນມື້ນີ້ 19ຫລາຍໄປກວ່ານັ້ນອີກ ພຣະຜູ້ເປັນເຈົ້າ ຈະມອບພວກ ອິສຣາເອນ ພ້ອມກັບຕົວ

[ກ]ອຸຣິມ ເບິ່ງ ອພຍ. 28:30

ທ່ານໄວ້ໃນມືຂອງຄົນ ຟີລິດສະຕິນ; ມື້ອື່ນຕົວທ່ານພ້ອມກັບລູກຊາຍທັງຫລາຍຂອງທ່ານຈະຢູ່
ກັບເຮົາ ແລະ ພຣະຜູ້ເປັນເຈົ້າຈະມອບກອງທັບ ອິສຣາເອນ ໄວ້ໃນມືຂອງຄົນ ຟີລິດສະຕິນ."
20ໃນທັນໃດນັ້ນ ຊາອູນ ກໍລົ້ມລົງນອນຍາວຢຽດເທິງພື້ນດິນ ແລະຕົກໃຈຢ້ານຫລາຍຍ້ອນ
ຖ້ອຍຄຳຂອງຊາມູເອນ ແລະ ເພິ່ນບໍ່ມີແຮງເພາະບໍ່ໄດ້ກິນອາຫານມື້ໜຶ່ງກັບຄືນໜຶ່ງແລ້ວ. 21ຍິງ
ໝໍເຢົານັ້ນໄດ້ເຂົ້າມາຫາຊາອູນ, ເມື່ອລາວເຫັນວ່າຊາອູນຕົກໃຈຫລາຍຈຶ່ງກ່າວວ່າ "ເບິ່ງແມ,
ຍິງຜູ້ຮັບໃຊ້ ຂອງທ່ານຍ່ອມເຊື່ອຟັງຄຳສັ່ງຂອງທ່ານ ແລະຂ້ານ້ອຍໄດ້ເອົາຊີວິດວາງໄວ້ໃນມື
ຂອງທ່ານ ແລະຍອມຟັງຄຳສັ່ງທີ່ພະອົງຈະກ່າວສັ່ງທຸກປະການ 22ເພາະສະນັ້ນ ບັດນີ້ຂໍທ່ານຈົ່ງ
ຟັງສຽງຍິງຜູ້ຮັບໃຊ້ຂອງທ່ານ ຂໍໃຫ້ຂ້ານ້ອຍໄດ້ຖວາຍອາຫານຕໍ່ພະອົງຈັກໜ້ອຍໜຶ່ງ, ຂໍພະອົງ
ຮັບປະທານເພື່ອພະອົງຈະມີແຮງເດີນທາງຕໍ່ໄປ."
23ເພິ່ນໄດ້ປະຕິເສດ ແລະກ່າວວ່າ "ເຮົາບໍ່ກິນ" ແຕ່ພວກຂ້າໃຊ້ກັບຍິງນັ້ນອ້ອນວອນເພິ່ນ
ເພິ່ນກໍຟັງຄວາມຂອງ ພວກເຂົາ ແລະລຸກຂຶ້ນຈາກພື້ນດິນນັ່ງລົງເທິງຕຽງ 24ຍິງໝໍເຢົາຄົນນັ້ນມີ
ລູກງົວອ້ວນພີໂຕໜຶ່ງຢູ່ໃນເຮືອນ ນາງກໍຟ້າວເອົາມັນໄປຂ້າ ແລ້ວເອົາແປ້ງມານວດປີ້ງເຮັດເຂົ້າ-
ຈີ່ບໍ່ມີເຊື້ອ 25ນາງກໍນຳເອົາຂອງກິນມາໃຫ້ຊາອູນ ແລະພວກຂ້າໃຊ້ຂອງເພິ່ນ ພວກເຂົາຮັບປະ-
ທານແລ້ວກໍກັບເມືອໃນ ຄືນນັ້ນເລີຍ.

# ບົດທີ 29

## ເຈົ້ານາຍຟີລິດສະຕິນຄັດຄ້ານເລື່ອງດາວິດ

1ຝ່າຍຄົນ ຟີລິດສະຕິນ ໄດ້ພາກັນທ້ອນໂຮມກຳລັງທັງໝົດຢູ່ ອາເຟັກ ແລະຄົນ ອິສຣາເອນ ກໍ
ຕັ້ງຄ້າຍຢູ່ນ້ຳພຸໃນ ເມືອງ ເຢດຊະເຣເອນ. 2ເຈົ້ານາຍ ຟີລິດສະຕິນ ເຄື່ອນທັບໄປຕາມກອງຮ້ອຍ
ແລະກອງພັນ ແຕ່ດາວິດກັບຄົນຂອງເພິ່ນກໍຍ່າງຜ່ານໄປເປັນ ກອງຫລັງກັບອາກີເຊ.
3ແລ້ວພວກເຈົ້ານາຍຂອງຄົນ ຟີລິດສະຕິນ ໄດ້ຖາມວ່າ "ພວກ ເຮັບເຣີ ເຫລົ່ານີ້ແມ່ນພວກໃດ?"
ແລະ ອາກີເຊ ໄດ້ຕອບເຈົ້ານາຍຄົນ ຟີລິດສະຕິນ ວ່າ "ນີ້ຄື ດາວິດ ຜູ້ຮັບໃຊ້ຂອງຊາອູນກະສັດ ອິ-
ສຣາເອນ ບໍ່ແມ່ນບໍ? ລາວໄດ້ຢູ່ກັບເຮົາເປັນເວລາຫລາຍປີມາແລ້ວ ແຕ່ຂ້າພະເຈົ້າຍັງບໍ່ພົບ
ຄວາມຜິດໃນຕົວລາວເລີຍ ຕັ້ງແຕ່ລາວໜີມາຢູ່ນຳຂ້າພະເຈົ້າຈົນເຖິງທຸກມື້ນີ້."
4ແຕ່ເຈົ້ານາຍ ຟີລິດສະຕິນ ໄດ້ໃຈຮ້າຍໃຫ້ອາກີເຊ ແລະບອກເພິ່ນວ່າ "ຂໍສົ່ງຊາຍຄົນນັ້ນ ກັບ
ໄປບ່ອນທີ່ທ່ານໄດ້ກຳນົດໃຫ້ລາວຢູ່ ແລະຢ່າໃຫ້ລາວລົງໄປຮົບກັບພວກເຮົາ ຢ້ານວ່າເມື່ອພວກ
ເຮົາສູ້ຮົບກັນນັ້ນ ລາວຈະກາຍເປັນສັດຕູຂອງເຮົາ. ຊາຍຄົນນີ້ຈະຄືນດີກັບເຈົ້ານາຍຂອງລາວ
ໄດ້ຢ່າງໃດ ຖ້າບໍ່ແມ່ນດ້ວຍຫົວຂອງຄົນທັງຫລາຍເຫລົ່ານີ້? 5ບໍ່ແມ່ນ ດາວິດ ຄົນນີ້ບໍທີ່ພວກເຂົາ
ຮ້ອງເພງຕອບກັນໃນການຟ້ອນລຳວ່າ 'ຊາອູນ ຂ້າຄົນເປັນພັນໆ ແລະ ດາວິດ ຂ້າຄົນເປັນ
ໝື່ນໆ.'"

## ອາກີເຊສົ່ງດາວິດກັບໄປ

6ອາກີເຊ ຈຶ່ງເອີ້ນ ດາວິດ ເຂົ້າມາ ແລະບອກເພິ່ນວ່າ "ພຣະຜູ້ເປັນເຈົ້າຊົງພຣະຊົນຢູ່ຢ່າງແນ່-
ນອນສັນໃດ ທ່ານໄດ້ປະຕິບັດຕົນເປັນຄົນສັດຊື່ມາແລ້ວໃນສາຍຕາຂອງເຮົາ ເຮົາກໍເຫັນດີທີ່

ທ່ານອອກໄປຮົບກັບເຮົາ ເພາະເຮົາບໍ່ ເຫັນມີຄວາມຜິດອັນໃດໃນຕົວເຈົ້າຕັ້ງແຕ່ມື້ທີ່ເຈົ້າໄດ້ມາຢູ່
ກັບເຮົາຈົນເຖິງມື້ນີ້; ແຕ່ຢ່າງໃດກໍຕາມ ບັນດາເຈົ້ານາຍບໍ່ເຫັນພ້ອມໃນເລື່ອງຂອງທ່ານ [7]ສະນັ້ນ
ຂໍທ່ານກັບໄປ ຈົ່ງໄປຢ່າງສັນຕິສຸກສາ ເພື່ອບໍ່ໃຫ້ຂັດໃຈບັນດາເຈົ້ານາຍພວກຟີລິດສະຕິນ."
[8]ແລະ ດາວິດ ໄດ້ຖາມ ອາກິເຊ ວ່າ "ແຕ່ວ່າຂ້ານ້ອຍໄດ້ເຮັດສິ່ງໃດຜິດ ແລະທ່ານໄດ້ພົບຄວາມ
ຜິດອັນໃດໃນຜູ້ຮັບໃຊ້ຂອງທ່ານຕັ້ງແຕ່ມື້ທີ່ຂ້ານ້ອຍເຂົ້າມາຮັບລາຊະການຈົນຮອດເວລານີ້ ຈຶ່ງບໍ່
ໃຫ້ຂ້ານ້ອຍໄປຮົບກັບສັດຕູຂອງກະສັດ ເຈົ້ານາຍຂອງຂ້ານ້ອຍ" [9]ອາກິເຊ ໄດ້ຕອບ ດາວິດ ວ່າ
"ເຮົາຮູ້ແລ້ວວ່າໃນສາຍຕາຂອງເຮົາທ່ານເປັນຄົນດີ ຄືກັບທູດສະຫວັນອົງໜຶ່ງຂອງ ພຣະເຈົ້າ ແຕ່
ບັນດາເຈົ້ານາຍຂອງ ຟີລິດສະຕິນ ໄດ້ກ່າວວ່າ 'ຢ່າໃຫ້ລາວຂຶ້ນໄປຮົບກັບພວກເຮົາເລີຍ.' [10]ເມື່ອ
ເປັນຢ່າງນີ້ ເຈົ້າຈົ່ງລຸກຂຶ້ນ ແຕ່ ເຊົ້າພ້ອມກັບ ພວກຮັບ ໃຊ້ ແຫ່ງນາຍ ຂອງ ເຈົ້າທີ່ ໄດ້ມາກັບ ເຈົ້າ
ກ່ອນຈະແຈ້ງ ໃຫ້ພວກທ່ານຈົ່ງລຸກຂຶ້ນ ແລະກັບເມືອສາ."
[11]ດາວິດ ກັບຄົນຂອງ ເພິ່ນຈຶ່ງລຸກຂຶ້ນຕັ້ງແຕ່ເຊົ້າມືດ ເພື່ອອອກເດີນທາງໃນຕອນເດິກກັບໄປ
ແຜ່ນດິນ ຟີລິດສະຕິນ ແຕ່ພວກ ຟີລິດສະຕິນ ໄດ້ຂຶ້ນໄປ ເຢດຊະເຣເອນ.

# ບົດທີ 30

## ດາວິດແກ້ແຄ້ນອາມາເລັກ

[1]ຢູ່ຕໍ່ມາ ເມື່ອ ດາວິດ ກັບຄົນຂອງຕົນມາຮອດເມືອງ ຊິກລັກ ໃນມື້ທີ່ສາມ ປະກົດວ່າຄົນ ອາມາ-
ເລັກ ໄດ້ມາ ປຸ້ນ ແລະ ໂຈມຕີພາກໃຕ້ຂອງ ເມືອງ ຊິກລັກ ແລ້ວ ພ້ອມທັງ ຈູດ ເຜົາ ເມືອງນັ້ນ
[2]ພວກເຂົາໄດ້ເອົາຜູ້ຍິງ ແລະທຸກຄົນທີ່ຢູ່ທີ່ນັ້ນໄປເປັນຊະເລີຍ ທັງຜູ້ໃຫຍ່ ແລະເດັກນ້ອຍ ແຕ່ບໍ່
ໄດ້ຂ້າຜູ້ໃດຈັກຄົນ ມີແຕ່ກວາດຕ້ອນໄປກັບພວກເຂົາ.
[3]ເມື່ອ ດາວິດ ກັບຄົນຂອງ ເພິ່ນມາຮອດຕົວ ເມືອງ ເບິ່ງແມ, ເມືອງນັ້ນຖືກຈູດ ເຜົາດ້ວຍໄຟ
ເມຍກັບລູກຊາຍ ລູກສາວຂອງພວກເຂົາກໍຖືກກວາດໄປເປັນຊະເລີຍ [4]ແລ້ວ ດາວິດ ກັບປະຊາ-
ຊົນທີ່ຢູ່ກັບເພິ່ນກໍຮ້ອງໄຫ້ສຽງດັງຈົນພວກເຂົາບໍ່ມີແຮງຈະຮ້ອງໄຫ້ອີກ [5]ອາຮີໂນອາມ ຊາວ ເຢດ-
ຊະເຣເອນ ແລະ ອາບີກາຍ ແມ່ໝ້າຍຂອງ ນາບານ ຊາວ ກາເມນ ເມຍທັງສອງຂອງ ດາວິດ ກໍ
ຖືກກວາດໄປເປັນຊະເລີຍຄືກັນ [6]ແລະ ດາວິດ ກໍເປັນທຸກໃຈຫລາຍ ເພາະຄົນທັງຫລາຍຂູ່ວ່າຈະ
ຂວ້າງກ້ອນຫີນໃສ່ຕົນ ເພາະຈິດໃຈຂອງພວກເຂົາຕ່າງກໍຂົມຂື່ນຫລາຍ ຍ້ອນພວກລູກຊາຍ ແລະ
ລູກສາວຂອງພວກ ເຂົາຖືກກວາດ ໄປໝົດ, ແຕ່ ດາວິດ ຊູກຳລັງ ຕົວ ເອງຂຶ້ນໃນ ພຣະຜູ້ເປັນເຈົ້າ
ພຣະເຈົ້າ ຂອງທ່ານ.
[7]ດາວິດ ຈຶ່ງ ເວົ້າກັບປະໂລຫິດ ອາບີອາທາ ລູກຊາຍຂອງ ອາຮີເມເລັກ ວ່າ "ຂໍນຳ ເອໂຟດ ມາໃຫ້
ຂ້າພະເຈົ້າ" ອາບີອາທາ ກໍນຳ ເອໂຟດ ມາໃຫ້ ດາວິດ. [8]ແລະ ດາວິດ ທູນຖາມ ພຣະຜູ້ເປັນເຈົ້າ
ວ່າ "ສົມຄວນບໍທີ່ຂ້າພະອົງຈະຕິດຕາມກອງປຸ້ນນີ້ ຂ້າພະອົງຈະໄປທັນພວກເຂົາບໍ?" ພຣະອົງ
ຕອບເພິ່ນວ່າ "ຈົ່ງຕິດຕາມໄປ ເຈົ້າຈະໄປທັນພວກເຂົາຢ່າງແນ່ນອນ ແລະຈະຊ່ວຍເອົາທຸກສິ່ງ
ກັບຄືນມາໄດ້."
[9]ດາວິດ ກໍໄດ້ອອກຕິດຕາມພ້ອມກັບຄົນຂອງຕົນຫົກຮ້ອຍຄົນທີ່ຢູ່ນຳ ແລະພວກເຂົາກໍມາຮອດ

ຫ້ວຍນໍ້າ ເບໂຊເຣ ສ່ວນຈຳພວກທີ່ໄປຊ້າກໍໄດ້ພັກຢູ່ບ່ອນນັ້ນ 10ແຕ່ດາວິດໄດ້ເດີນທາງຕິດຕາມຕໍ່
ໄປ ທັງຕົວເພິ່ນ ແລະຄົນຈຳນວນສີ່ຮ້ອຍຄົນ, ສ່ວນສອງຮ້ອຍຄົນອິດເມື່ອຍຫລາຍ ບໍ່ສາມາດ
ຈະຂ້າມຫ້ວຍນໍ້າ ເບໂຊເຣກໍເລີຍໄດ້ຢຸດພັກຢູ່ທີ່ນັ້ນ.

11ພວກເຂົາໄດ້ພົບຊາວ ເອຢິບ ຄົນໜຶ່ງຢູ່ທີ່ທົ່ງນາ ແລະໄດ້ພາຄົນນັ້ນໄປຫາ ດາວິດ ແລ້ວເອົາ
ເຂົ້າຈີ່ໃຫ້ກິນ ແລະເອົານໍ້າໃຫ້ດື່ມ 12ແລະໃຫ້ຂະໜົມໝາກເດື່ອແຜ່ນໜຶ່ງກັບພວງອະງຸ່ນແຫ້ງ
ສອງພວງ ເມື່ອລາວຮັບປະທານແລ້ວຈິດໃຈຂອງລາວ ກໍຟື້ນຂຶ້ນ ເພາະລາວບໍ່ໄດ້ກິນອາຫານ
ແລະດື່ມນໍ້າມາໄດ້ສາມມື້ສາມຄືນແລ້ວ 13ແລະ ດາວິດ ຖາມລາວວ່າ “ເຈົ້າເປັນຄົນພວກໃດ ແລະ
ເຈົ້າມາຈາກໃສ?” ລາວຕອບວ່າ “ຂ້າພະເຈົ້າເປັນຄົນໜຸ່ມຊາວ ເອຢິບ ເປັນຄົນໃຊ້ຂອງຄົນ ອາ-
ມາເລັກ ຄົນໜຶ່ງ ເມື່ອສາມມື້ຜ່ານມາ ຂ້າພະເຈົ້າປ່ວຍ ນາຍຂ້າພະເຈົ້າຈຶ່ງປະຖິ້ມຂ້າພະເຈົ້າໄວ້
14ພວກເຮົາໄປປຸ້ນພາກໃຕ້ຂອງຄົນ ເກເຣັດ ໃນ ແຂວງ ຢູດາ ແລະທິດໃຕ້ຂອງ ກາເລັບ ແລະ
ພວກເຮົາຈູດເຜົາເມືອງ ຊິກລັກ ດ້ວຍໄຟ” 15ດາວິດ ຖາມລາວວ່າ “ເຈົ້າຈະພາເຮົາລົງໄປຫາກອງ
ປຸ້ນນີ້ໄດ້ບໍ?” ລາວຕອບວ່າ” ຂໍທ່ານປະຕິຍານແກ່ຂ້າພະເຈົ້າ ວ່າຈະບໍ່ຂ້າຂ້າພະເຈົ້າ ແລະຈະບໍ່
ມອບຂ້າພະເຈົ້າໄວ້ໃນມືນາຍຂອງຂ້າພະເຈົ້າ ແລ້ວຂ້າພະເຈົ້າຈຶ່ງຈະພາທ່ານໄປຫາກອງປຸ້ນ
ນັ້ນ.”

16ເມື່ອລາວໄດ້ພາດາວິດລົງໄປແລ້ວ ເບິ່ງແມ, ພວກເຂົາໄດ້ແຍກກັນຢູ່ເຕັມຕາມພື້ນດິນ,
ພາກັນກິນແລະ ດື່ມ, ເຕັ້ນລຳຢ່າງມ່ວນຊື່ນ ເພາະພວກເຂົາປຸ້ນສິ່ງຂອງຈາກແຜ່ນດິນ ຟີລິດສະ-
ຕິນ ແລະຈາກແຜ່ນດິນ ຢູດາ ໄດ້ເປັນຈຳນວນຫລວງຫລາຍ 17ແລະ ດາວິດ ກໍຂ້າຟັນພວກເຂົາ
ຕັ້ງແຕ່ຫົວຄໍ່າຈົນຮອດຕອນເດິກຂອງມື້ໃໝ່ ບໍ່ມີຊາຍຄົນໃດໜີລອດພົ້ນໄປໄດ້ຈັກຄົນດຽວ ເວັ້ນ
ແຕ່ຊາຍສີ່ຮ້ອຍຄົນຊຶ່ງຂີ່ອູດໜີໄປໄດ້. 18ສິ່ງຂອງຕ່າງໆທີ່ພວກ ອາມາເລັກ ຍຶດເອົາໄປນັ້ນ ດາ-
ວິດ ສາມາດເອົາຄືນມາໄດ້ທັງໝົດ ແລະ ດາວິດ ຊ່ວຍເມຍທັງ ສອງຂອງເພິ່ນຄືນມາ 19ບໍ່ມີສິ່ງໃດ
ສູນເສຍໄປຈາກເພິ່ນເລີຍ ບໍ່ວ່າສິ່ງນ້ອຍ ຫລືໃຫຍ່ ລູກຊາຍ ຫລືລູກສາວ ທຸກສິ່ງທີ່ພວກເຂົາໄດ້
ປຸ້ນເອົານັ້ນ ດາວິດ ໄດ້ຄືນມາໝົດ 20ດາວິດ ຍັງຍຶດໄດ້ບັນດາຝູງແບ້ ແກະຝູງງົວ ແລະພວກເຂົາ
ທັງຫລາຍໄລ່ຕ້ອນຝູງສັດໄປຕໍ່ໜ້າ ດາວິດ ແລະກ່າວວ່າ “ສິ່ງເຫລົ່ານີ້ເປັນຂອງ ດາວິດ.”

21ແລ້ວ ດາວິດ ໄດ້ກັບມາຫາຄົນສອງຮ້ອຍທີ່ອ່ອນເພຍຫລາຍຈົນບໍ່ສາມາດຕິດຕາມ ດາວິດ ໄປ
ຢູ່ຄ້າຍພັກຢູ່ທີ່ຫ້ວຍນໍ້າ ເບໂຊເຣ ແລະ ພວກເຂົາທັງຫລາຍໄດ້ອອກໄປຕ້ອນຮັບ ດາວິດ ແລະ
ຕ້ອນຮັບພວກທີ່ໄປກັບເພິ່ນ ເມື່ອ ດາວິດ ເຂົ້າມາໃກ້ປະຊາຊົນເພິ່ນກໍຄຳນັບພວກເຂົາ. 22ຈຳພວກ
ຄົນຊົ່ວ ແລະພວກອັນທະພານໃນຈຳນວນຄົນທີ່ຕິດຕາມ ດາວິດ ໄປໄດ້ເວົ້າວ່າ “ພວກເຂົາບໍ່ໄດ້
ໄປກັບເຮົາ ເຮົາຈະບໍ່ແບ່ງປັນສິ່ງຂອງໃດໆທີ່ເອົາຄືນມາໄດ້ນັ້ນໃຫ້ແກ່ພວກເຂົາ ໃຫ້ພວກເຂົາ
ເອົາແຕ່ເມຍກັບລູກຂອງພວກເຂົາໄປກໍພໍ.”

23ແຕ່ ດາວິດ ກ່າວວ່າ “ພີ່ນ້ອງທັງຫລາຍຂອງຂ້າພະເຈົ້າເອີຍ ທ່ານຢ່າເຮັດຢ່າງນັ້ນກັບສິ່ງທີ່
ພຣະຜູ້ເປັນເຈົ້າ ໄດ້ປະທານໃຫ້ແກ່ພວກເຮົາ, ພຣະອົງຜູ້ໄດ້ປົກປ້ອງຮັກສາພວກເຮົາໄວ້ ແລະ
ພຣະອົງໄດ້ມອບກອງປຸ້ນທີ່ມາຕໍ່ສູ້ກັບເຮົານັ້ນໄວ້ໃນມືຂອງພວກເຮົາ 24ໃນເລື່ອງນີ້ໃຜຈະຟັງ
ພວກເຈົ້າ ເພາະຄົນທີ່ໄປສູ້ຮົບໄດ້ຮັບສ່ວນແບ່ງຢ່າງໃດ ຄົນທີ່ເຝົ້າຮັກສາເຄື່ອງຂອງກໍຄວນໄດ້

ສ່ວນແບ່ງຢ່າງນັ້ນ ໃຫ້ພວກເຂົາໄດ້ຮັບສ່ວນແບ່ງຄືກັນສາ."
[25]ຕັ້ງແຕ່ເວລານັ້ນເປັນຕົ້ນມາ ດາວິດກໍຕັ້ງຂໍ້ນີ້ໄວ້ໃຫ້ເປັນຂໍ້ກຳນົດກົດລະບຽບແລະຂໍ້ຄຳສັ່ງແກ່
ອິສຣາເອນ ຈົນເຖິງ ທຸກມື້ນີ້.
[26]ເມື່ອ ດາວິດ ມາຮອດ ເມືອງ ຊິກລັກ ແລ້ວ ກໍຈັດສົ່ງສິ່ງຂອງທີ່ໄດ້ມານັ້ນແບ່ງໄປໃຫ້ພວກອາ-
ວຸໂສໃນ ຢູດາ ຜູ້ທີ່ເປັນມິດສະຫາຍຂອງຕົນ ແລະຝາກຖ້ອຍຄຳວ່າ "ເບິ່ງແມ, ນີ້ເປັນຂອງຂວັນ
ຝາກມາໃຫ້ທ່ານຊຶ່ງເປັນສິ່ງຂອງທີ່ເອົາມາຈາກພວກສັດຕູຂອງ ພຣະຜູ້ເປັນເຈົ້າ" [27]ຄືແກ່ຄົນທີ່ຢູ່
ໃນ ເບັດເອນ ໃນ ຣາໂມດ ທາງພາກໃຕ້ ແລະຊາວ ເມືອງ ຢັດຕີ [28]ຊາວ ເມືອງ ອາໂຣເອ ຊາວ
ເມືອງ ສິຟະໂມດ ແລະຊາວ ເມືອງ ເອຊະເຕມົວ [29]ແລະຊາວ ເມືອງ ຣາການ, ບັນດາຫົວເມືອງ
ຂອງຄົນ ເຢຣາເມເອນ ແລະບັນດາຊາວ ເມືອງ ເກນີ [30]ຊາວ ເມືອງ ໂຮມາ, ຊາວ ເມືອງ ໂບ-ອາ-
ຊານ ແລະຊາວ ເມືອງ ອາທາກ [31]ແລະຊາວ ເມືອງ ເຮັບໂຣນ ແລະບັນດາບ້ານເມືອງທີ່ ດາວິດ
ກັບຄົນຂອງເພິ່ນໄດ້ເຄີຍໄປໆມາໆ.

# ບົດທີ 31

## ການຕາຍຂອງຊາອູນ

[1]ຝ່າຍຄົນ ຟີລິດສະຕິນ ໄດ້ສູ້ຮົບກັບຄົນ ອິສຣາເອນ ແລະຄົນ ອິສຣາເອນ ໄດ້ປົບໜີຕໍ່ໜ້າພວກ
ຟີລິດສະຕິນ ແລະໄດ້ລົ້ມຕາຍຢູ່ເທິງພູເຂົາ ກິນໂບອາ [2]ຄົນ ຟີລິດສະຕິນ ໄດ້ໄລ່ຕິດຕາມທັນຊາ-
ອູນ ແລະພວກລູກຊາຍ ແລະພວກເຂົາໄດ້ຂ້າ ໂຢນາທານ ອາບີນາດາບ ແລະ ມັນກີຊົວ ລູກ
ຊາຍຂອງ ຊາອູນ [3]ການສູ້ຮົບຕໍ່ສູ້ກັບ ຊາອູນ ນັ້ນຮຸນແຮງຫລາຍ, ພວກນັກຍິງທະນູນຳທັນເພິ່ນ
ແລະຍິງພະອົງຖືກບາດເຈັບສາຫັດດ້ວຍລູກທະນູຂອງນັກຍິງທະນູນັ້ນ.
[4]ແລ້ວ ຊາອູນ ກໍສັ່ງຄົນຖືອາວຸດຂອງພະອົງວ່າ "ຈົ່ງຊັດດາບຂອງເຈົ້າອອກມາແທງເຮົາໃຫ້
ຊອດ ຢ້ານວ່າຄົນທີ່ບໍ່ ຮັບພິທີຕັດນັ້ນຈະເຂົ້າມາແທງເຮົາ ແລະປະຈານຂາຍໜ້າເຮົາ" ແຕ່ຜູ້ຖື
ອາວຸດບໍ່ຍອມເຮັດຕາມເພາະລາວຢ້ານຫລາຍ ຊາອູນ ຈຶ່ງຖອດດາບຂອງພະອົງອອກແລ້ວລົ້ມ
ທັບດາບນັ້ນ. [5]ເມື່ອຜູ້ຖືອາວຸດເຫັນວ່າຊາອູນ ຕາຍແລ້ວ ລາວກໍລົ້ມທັບດາບຂອງລາວເອງຕາຍ
ນຳເພິ່ນ [6]ໃນມື້ນັ້ນ ຊາອູນ ແລະລູກຊາຍທັງສາມພ້ອມທັງຜູ້ຖືອາວຸດ ແລະຄົນທັງໝົດຂອງຕົນ
ໄດ້ຕາຍໄປພ້ອມກັນ.
[7]ເມື່ອຄົນ ອິສຣາເອນ ທີ່ຢູ່ຮ່ອມພູຝາກນັ້ນ ແລະຜູ້ທີ່ຢູ່ຟາກແມ່ນ້ຳຢໍແດນ ເບື້ອງນັ້ນເຫັນຄົນ ອິ-
ສຣາເອນ ໜີໄປແລະ ເຫັນວ່າ ຊາອູນ ກັບລູກຊາຍຂອງ ເພິ່ນຕາຍ ແລ້ວ ພວກເຂົາກໍປະຖິ້ມບ້ານ
ເມືອງທັງຫລາຍຂອງຕົນແລ້ວປົບໜີໄປ ແລະຄົນ ຟີລິດສະຕິນ ກໍເຂົ້າມາອາໄສຢູ່ທີ່ນັ້ນ.
[8]ຕໍ່ມາໃນຕອນເຊົ້າຂອງມື້ໃໝ່ພວກ ຟີລິດສະຕິນ ໄປຖອດເອົາເສື້ອຜ້າຈາກຄົນທີ່ຖືກຂ້າຕາຍກໍ
ພົບສົບຂອງ ຊາອູນ ແລະລູກຊາຍທັງສາມຢູ່ເທິງພູເຂົາ ກິນໂບອາ [9]ແລະພວກ ເຂົາໄດ້ຕັດຫົວ
ຂອງຊາອູນ ແລະຖອດເຄື່ອງອາວຸດຂອງເພິ່ນອອກ ແລ້ວສົ່ງຜູ້ສົ່ງຂ່າວອອກໄປທົ່ວແຜ່ນດິນ ຟີ-
ລິດສະຕິນ ປະກາດຂ່າວດີໃນພະວິຫານຮູບພະທັງຫລາຍຂອງພວກເຂົາໃຫ້ປະຊາຊົນຟັງ [10]ພວກ
ເຂົາ ເອົາ ເຄື່ອງອາວຸດຂອງພະອົງບັນຈຸໄວ້ໃນວິຫານຂອງ ພະອັດຊະໂຕເຣດ ແລະ ເອົາຊາກສົບ

ພວກເຂົາຕອກຄຶງໄວ້ທີ່ກຳແພງເມືອງ ເບັດ-ເຊອານ.

[11] ເມື່ອຊາວ ຢາເບັດ-ກີເລອາດ ໄດ້ຍິນວ່າຄົນ ຟີລິດສະຕິນ ເຮັດຢ່າງນັ້ນກັບ ຊາອູນ [12] ຊາຍທີ່
ກ້າຫານທຸກຄົນໄດ້ອອກເດີນທາງຕະຫລອດຄືນເພື່ອໄປເອົາຊາກສົບຂອງຊາອູນ ແລະຊາກສົບ
ລູກຊາຍທັງສາມຂອງເພິ່ນລົງຈາກກຳແພງເມືອງ ເບັດ-ເຊອານ ແລະຫາມມາທີ່ເມືອງຢາເບັດ
ແລະເຜົາສົບຢູ່ບ່ອນນັ້ນ [13] ພວກເຂົາໄດ້ເກັບກະດູກໄປຝັງໄວ້ກ້ອງຕົ້ນໝາກຂາມຢູ່ເມືອງຢາເບດ
ແລະພວກເຂົາໄດ້ອົດອາຫານໃນລະຫວ່າງເຈັດມື້.

* * *

# ຊາມູເອນ ສະບັບທີສອງ

## ບົດທີ 1

### ດາວິດຮູ້ຂ່າວການຕາຍຂອງຊາອູນ

1ໃນເວລາທີ່ຊາອູນເສຍຊີວິດນັ້ນ ພໍດີດາວິດຜູ້ຮົບຊະນະພວກອາມາເລັກໄດ້ກັບມາເມືອງ
ຊິກລັກ ແລະພັກຢູ່ທີ່ນີ້ສອງມື້. 2ມື້ຕໍ່ມາ ມີຊາຍໜຸ່ມຄົນໜຶ່ງເດີນທາງມາຈາກຄ້າຍພັກຂອງຊາ-
ອູນ ລາວໄດ້ຈີກເສື້ອຜ້າຂອງຕົນ ແລະເອົາດິນໃສ່ຫົວ ເພາະຄວາມເສຍໃຈ ເມື່ອມາຮອດ ລາວ
ຈຶ່ງພົບດາວິດ ແລະກົ້ມຂາບລົງດ້ວຍຄວາມນັບຖື.

3ດາວິດຈຶ່ງຖາມລາວວ່າ, “ເຈົ້າມາແຕ່ໃສ?” ລາວຕອບວ່າ, “ຂ້ານ້ອຍໜີມາຈາກຄ້າຍທະ-
ຫານອິສຣາເອນ.” 4ດາວິດຈຶ່ງເວົ້າວ່າ, “ບອກຂ້ອຍເບິ່ງດູວ່າມີຫຍັງເກີດຂຶ້ນ.” ລາວເວົ້າຂຶ້ນວ່າ,
“ທະຫານຂອງພວກເຮົາໄດ້ປົບໜີຈາກສະໜາມຮົບ ເພາະເຫັນວ່າຫລາຍຄົນໄດ້ຖືກຂ້າ ຮ່ວມທັງ
ຊາອູນ ແລະໂຢນາທານລູກຊາຍຂອງພະອົງດ້ວຍ.” 5ດາວິດຖາມລາວອີກວ່າ, “ເຫດໃດເຈົ້າ
ຈຶ່ງຮູ້ວ່າກະສັດຊາອູນ ແລະໂຢນາທານຕາຍແລ້ວ?” 6ຊາຍໜຸ່ມຄົນນັ້ນກໍຕອບວ່າ, “ພໍດີໃນເວ-
ລານັ້ນ ຂ້ານ້ອຍໄດ້ຢູ່ເທິງພູກິນໂບອາ ຂ້ານ້ອຍໄດ້ເຫັນກະສັດຊາອູນກຳລັງຢືນຄ້ຳຫອກຂອງ
ພະອົງຢູ່ ໃນເວລານັ້ນ ລົດຮົບແລະທະຫານມ້າຂອງສັດຕູກຳລັງແລ່ນເຂົ້າມາໃກ້ພະອົງ. 7ແລ້ວ
ພະອົງໄດ້ຫັນມາເຫັນຂ້ານ້ອຍຈຶ່ງຮ້ອງໃສ່ຂ້ານ້ອຍ ຂ້ານ້ອຍກໍທູນຕອບວ່າ, “ໂດຍຂ້ານ້ອຍ.”
8ພະອົງຖາມວ່າ ເຈົ້າແມ່ນໃຜ? ຂ້ານ້ອຍໄດ້ບອກພະອົງວ່າຂ້ານ້ອຍເປັນຄົນອາມາເລັກ. 9ພະ
ອົງກໍກ່າວຕໍ່ໄປວ່າ ຂ້ອຍໄດ້ຮັບບາດເຈັບຢ່າງສາຫັດ ຂ້ອຍໃກ້ຈະຕາຍແລ້ວ ເຈົ້າມາພີ້ແດ່ ແລະ
ຂ້າຂ້ອຍຖິ້ມເສຍ. 10ດັ່ງນັ້ນ ຂ້ານ້ອຍຈຶ່ງຂຶ້ນໄປຫາພະອົງ ແລະຂ້າພະອົງ ເພາະຂ້ານ້ອຍຮູ້ວ່າ
ໃນຂະນະທີ່ພະອົງລົ້ມລົງແລ້ວນັ້ນ ພະອົງກໍຈະຕ້ອງຕາຍ ແລ້ວຂ້ານ້ອຍໄດ້ປົດເອົາກະໂຈມ
ອອກຈາກຫົວຂອງພະອົງ ແລະຖອດເອົາສາຍແຂນຂອງພະອົງ ນຳມາມອບໃຫ້ທ່ານນີ້ແຫລະ.

11ເມື່ອໄດ້ຍິນດັ່ງນັ້ນ ດາວິດຈຶ່ງຈີກເສື້ອຜ້າຂອງຕົນດ້ວຍຄວາມເສຍໃຈ ແລະທະຫານຂອງ
ເພິ່ນທຸກຄົນກໍເຮັດເຊັ່ນດຽວກັນ. 12ພວກເຂົາໄດ້ອົດອາຫານເພື່ອໄວ້ທຸກໃຫ້ແກ່ຊາອູນ ແລະໂຢ-
ນາທານຈົນຮອດຄ່ຳ ແລະເພື່ອຊາວອິສຣາເອນ ຊຶ່ງເປັນໄພ່ພົນຂອງພຣະຜູ້ເປັນເຈົ້າ ເພາະວ່າ
ມີຫລາຍຄົນໄດ້ຖືກຂ້າຢູ່ໃນສະໜາມຮົບ.

13ດາວິດໄດ້ຖາມຊາຍໜຸ່ມທີ່ນຳຂ່າວມາບອກພະອົງນັ້ນວ່າ “ເຈົ້າເປັນຄົນຊາດໃດ?” ລາວຈຶ່ງ
ຕອບວ່າ, “ຂ້ານ້ອຍເປັນຄົນອາມາເລັກ ແຕ່ຂ້ານ້ອຍຢູ່ໃນປະເທດຂອງທ່ານ.” 14ດາວິດໄດ້
ຖາມອີກວ່າ, “ເປັນຫຍັງເຈົ້າຈຶ່ງກ້າຂ້າກະສັດທີ່ພຣະຜູ້ເປັນເຈົ້າຊົງເລືອກໄວ້?” 15ແລ້ວດາວິດກໍ
ເອີ້ນເອົາທະຫານຂອງເພິ່ນຜູ້ໜຶ່ງອອກມາແລະບອກວ່າ, “ຈົ່ງຂ້າມັນຖິ້ມເສຍ” ທະຫານຄົນນັ້ນກໍ
ໃຊ້ດາບຟັນໜຸ່ມອາມາເລັກຄົນນັ້ນຕາຍ. 16ແລ້ວດາວິດໄດ້ເວົ້າວ່າ, “ຊາຍໜຸ່ມເອີຍ ໂທດນີ້ເຈົ້າ
ໄດ້ນຳມາສູ່ຕົວເຈົ້າເອງ ເມື່ອເຈົ້າຍອມວ່າເຈົ້າໄດ້ຂ້າຜູ້ທີ່ພຣະຜູ້ເປັນເຈົ້າຊົງເລືອກໄວ້ເປັນກະສັດ
ນັ້ນ ເຈົ້າກໍມີໂທດແລ້ວ.”

## ດາວິດໂສກເສົ້າເສຍໃຈຍ້ອນຊາອູນ

[17]ດາວິດໄດ້ຮ້ອງເພງໂສກເສົ້ານີ້ເພື່ອໄວ້ອາໄລໃຫ້ ຊາອູນ ແລະໂຢນາທານ. [18]ເພິ່ນໄດ້ສັ່ງ
ໃຫ້ສອນເພງນີ້ແກ່ຊາວຢູດາ. ເພງນີ້ໄດ້ບັນທຶກໄວ້ໃນປຶ້ມຂອງຢາຊາວ່າ,

19 "ຜູ້ນຳທີ່ຍອດຢ້ຽມຂອງພວກເຮົາໄດ້ຕາຍຢູ່ເທິງພູນ້ອຍອິສຣາເອນ
ທະຫານຜູ້ເກັ່ງກ້າຂອງພວກເຮົາໄດ້ລົ້ມລົງ.
20 ຢ່າບອກເລື່ອງນີ້ແກ່ຊາວເມືອງກັດ
ຫລືຕາມຖະໜົນຫົນທາງໃນເມືອງອາຊະກາໂລນ
ຢ່າເຮັດໃຫ້ຜູ້ຍິງເມືອງຟີລິດສະຕິນດີໃຈ
ຢ່າໃຫ້ພວກຜູ້ສາວຄົນຊົ່ວຮ້າຍຊົມຊື່ນຍິນດີ.
21 "ຂໍຢ່າໃຫ້ຝົນ ຫລືນ້ຳໝອກຕົກລົງໃສ່ພູນ້ອຍກິນໂບອາ
ຂໍໃຫ້ທົ່ງນາທີ່ນັ້ນແຫ້ງແລ້ງຢູ່ເລື້ອຍໆ
ຜູ້ກ້າຫານໄດ້ປະຖິ້ມແຜ່ນເຫລັກຕ້ານທານຂອງຕົນໄວ້
ໃນບ່ອນນັ້ນຢ່າງໜ້າລະອາຍ
ແຜ່ນເຫລັກຕ້ານທານຂອງຊາອູນກໍເຂົ້າຂີ້ໝ້ຽງ.
22 ຄັນທະນູຂອງໂຢນາທານເປັນໜ້າຢ້ານຫລາຍ
ດາບຂອງຊາອູນບໍ່ມີຄວາມເມດຕາປານີ
ໄດ້ຂ້າສັດຕູຜູ້ເກັ່ງກ້າ.
23 ຊາອູນແລະໂຢນາທານເປັນຄົນປະເສີດ ແລະໜ້າຮັກຫລາຍ
ພະອົງຊົງຢູ່ດ້ວຍກັນ ແລະຕາຍດ້ວຍກັນ
ເປັນຄົນວ່ອງໄວຄືນົກອິນຊີ ແລະແຂງແຮງຄືໂຕສິງ.
24 ຍິງຊາວອິສຣາເອນເອີຍ ຈົ່ງພາກັນໄວ້ທຸກໃຫ້ຊາອູນ
ພະອົງໄດ້ໃຫ້ພວກເຈົ້ານຸ່ງຫົ່ມເສື້ອຍາວສີແດງເຂັ້ມ
ທັງໃຫ້ປະດັບເພັດພອຍ ແລະຄຳໃສ່ຕົວພວກເຈົ້າ.
25 ທະຫານຜູ້ເກັ່ງກ້າກໍເສຍໄຊ
ພວກເຂົາໄດ້ຖືກຂ້າໃນສະໜາມຮົບ
ສ່ວນໂຢນາທານກໍນອນຕາຍຢູ່ເທິງພູນ້ອຍ.
26 ໂຢນາທານອ້າຍຂອງຂ້ອຍເອີຍ "ຂ້ອຍໄວ້ທຸກແກ່ເຈົ້າ
ຄວາມຮັກທີ່ຂ້ອຍມີຕໍ່ເຈົ້ານັ້ນຫລວງຫລາຍ
ຄວາມຮັກທີ່ເຈົ້າມີຕໍ່ຂ້ອຍກໍປະເສີດຫລາຍ
ເໜືອກວ່າຄວາມຮັກຂອງພວກຜູ້ຍິງ."
27 "ທະຫານຜູ້ເກັ່ງກ້າໄດ້ເສຍໄຊ
ອາວຸດຂອງພວກເຂົາໃຊ້ການຫຍັງບໍ່ໄດ້."

# ບົດທີ 2

## ຄົນຢູດາແຕ່ງຕັ້ງດາວິດໃຫ້ເປັນກະສັດທີ່ເຮັບໂຣນ

1ຢູ່ຕໍ່ມາຫລັງຈາກນັ້ນ ດາວິດ ໄດ້ທູນຖາມ ພຣະຜູ້ເປັນເຈົ້າ ວ່າ "ສົມຄວນບໍທີ່ຂ້າພະອົງຈະຂຶ້ນ
ໄປຍັງ ເມືອງໜຶ່ງ ໃນ ແຂວງ ຢູດາ?" ແລະ ພຣະຜູ້ເປັນເຈົ້າ ຕອບ ເພິ່ນວ່າ "ຈົ່ງຂຶ້ນໄປສາ" ດາວິດ
ທູນວ່າ "ຂ້າພະອົງຈະຂຶ້ນໄປເມືອງໃດ?" ພຣະເຈົ້າ ຕອບວ່າ "ເມືອງ ເຮັບໂຣນ" 2ແລ້ວ ດາວິດ ກໍ
ໄດ້ກັບ ເມືອພ້ອມກັບ ເມຍທັງສອງຂອງ ເພິ່ນຄື ອາຮີໂນອາມ ຊາວ ເຢດຊະເຣເອນ ແລະ ອາບີ-
ກາຍ ແມ່ໝ້າຍ ຂອງ ນາບານ ຊາວ ກາເມນ 3ແລະ ດາວິດ ກໍ ເອົາຄົນທີ່ຢູ່ກັບ ເພິ່ນຂຶ້ນ ໄປທຸກຄົນ
ພ້ອມທັງຄອບຄົວຂອງພວກເຂົາກໍໄປດ້ວຍ ແລະພວກເຂົາໄດ້ອາໃສຢູ່ ເມືອງຕ່າງໆໃນແຂວງ
ເຮັບໂຣນ 4ແລະຄົນ ຢູດາ ກໍພາກັນມາເຈີມ ດາວິດ ໃຫ້ເປັນກະສັດຂອງຄອບຄົວ ຢູດາ.

## ດາວິດຍົກຍ້ອງຄົນທີ່ຝັງສົບຊາອູນໄວ້

ເມື່ອມີຄົນມາບອກກະສັດ ດາວິດ ວ່າ "ຊາວ ຢາເບັດ-ກີເລອາດ ເປັນຜູ້ທີ່ຝັງສົບ ຊາອູນ" 5ກະ-
ສັດ ດາວິດ ໄດ້ໃຊ້ຜູ້ສົ່ງຂ່າວໄປຫາຊາວ ຢາເບັດ-ກີເລອາດ ນັ້ນ ໂດຍບອກກັບພວກເຂົາວ່າ "ຂໍ
ພຣະຜູ້ເປັນເຈົ້າ ຊົງ ອຳນວຍ ພຣະພອນ ແກ່ທ່ານ ທັງຫລາຍ ໃນ ການ ທີ່ ພວກທ່ານ ໄດ້ ສະແດງ
ຄວາມເມດຕາຕໍ່ກະສັດ ຊາອູນ ເຈົ້ານາຍຂອງພວກທ່ານ ແລະໄດ້ຝັງສົບທ່ານໄວ້ 6ບັດນີ້ຂໍ ພຣະ-
ຜູ້ເປັນເຈົ້າ ຊົງສະແດງຄວາມກະລຸນາ ແລະຄວາມຈິງ ແກ່ພວກທ່ານ ແລະຂ້າພະເຈົ້າຈະເຮັດດີຕໍ່
ທ່ານທັງຫລາຍ ຍ້ອນພວກທ່ານໄດ້ເຮັດການນີ້ 7ເພາະສະນັ້ນ ຂໍໃຫ້ມືຂອງທ່ານທັງຫລາຍເຂັ້ມ-
ແຂງຂຶ້ນ ແລະຂໍໃຫ້ພວກທ່ານກ້າຫານ ເພາະວ່າ ຊາອູນ ເຈົ້ານາຍຂອງພວກທ່ານໄດ້ຕາຍແລ້ວ
ແລະຄອບຄົວ ຢູດາ ໄດ້ເຈີມຂ້າພະເຈົ້າໃຫ້ເປັນກະສັດປົກຄອງພວກເຂົາ."

## ລູກຊາຍຂອງຊາອູນປົກຄອງອິສຣາເອນ

8ຝ່າຍ ອັບເນ ລູກຊາຍຂອງ ເນ ຜູ້ບັນຊາການກອງທັບຂອງ ຊາອູນ ໄດ້ພາ ອິດໂບເຊດ ລູກຊາຍ
ຂອງ ຊາອູນ ຂ້າມໄປເມືອງ ມາຮານາຢິມ 9ແລະ ໄດ້ສະຖາປະນາ ເພິ່ນ ໃຫ້ເປັນກະສັດປົກຄອງ
ແຂວງ ກີເລອາດ, ຄົນ ອາຊູ, ຄົນ ເຢດຊະເຣເອນ, ຄົນ ເອຟຣາຢິມ, ຄົນ ເບັນຢາມິນ ແລະຄົນ
ອິສຣາເອນ ທັງໝົດ. 10ເມື່ອ ອິດໂບເຊດ ລູກຊາຍຂອງ ຊາອູນ ເລີ່ມປົກຄອງ ອິສຣາເອນ ນັ້ນມີອາຍຸ
ສີ່ ສິບ ປີ ແລະ ໄດ້ປົກຄອງຢູ່ລະຫວ່າງສອງປີ ແຕ່ຄອບຄົວ ຢູດາ ໄດ້ຕິດຕາມກະສັດ ດາວິດ
11ສ່ວນ ດາວິດ ເປັນ ກະສັດ ປົກຄອງ ຄອບຄົວ ຢູດາ ໃນ ເມືອງ ເຮັບໂຣນ ເປັນ ເວລາ ເຈັດ ປີ ກັບ ຫົກ
ເດືອນ.

## ການສູ້ຮົບລະຫວ່າງຄົນຂອງດາວິດກັບຄົນຂອງອິດໂບເຊດ

12ອັບເນ ລູກຊາຍຂອງ ເນ ແລະພວກຜູ້ຮັບໃຊ້ ອິດໂບເຊດ ລູກຊາຍຂອງ ຊາອູນ ໄດ້ອອກຈາກ
ເມືອງ ມາຮານາຢິມ ໄປສູ່ເມືອງ ກີເບໂອນ 13ແລະ ໂຢອາບ ລູກຊາຍນາງ ເຊຣູຢາ ກັບພວກຜູ້ຮັບໃຊ້
ດາວິດ ກໍອອກໄປນຳ ແລະພວກເຂົາໄດ້ພົບກັນໃກ້ກັບໜອງນ້ຳເມືອງ ກີເບໂອນ ພວກໜຶ່ງຢູ່ແຄມ
ໜອງຟາກນີ້ ແລະ ອີກພວກໜຶ່ງຢູ່ແຄມໜອງຟາກນັ້ນ 14ອັບເນ ເວົ້າກັບ ໂຢອາບ ວ່າ "ຂໍໃຫ້
ພວກຄົນໜຸ່ມລຸກຂຶ້ນຕໍ່ສູ້ແຂ່ງກັນຫລິ້ນໃຫ້ເຮົາເບິ່ງ" ແລະ ໂຢອາບ ໄດ້ຕອບວ່າ "ໃຫ້ພວກເຂົາ
ລຸກຂຶ້ນສາ."

15ພວກເຂົາກໍລຸກຂຶ້ນຕາມຈຳນວນທີ່ນັບໄວ້ໃນແຕ່ລະຝ່າຍຄື ຝ່າຍເບັນຢາມິນ ແລະຝ່າຍ
ອິດໂບເຊດ ລູກຊາຍຂອງ ຊາອູນ ສິບສອງຄົນ ແລະຂ້າລາຊະການຂອງ ດາວິດ ສິບສອງຄົນ
16ຕ່າງຄົນກໍຈັບຄູ່ຕໍ່ສູ້ ແລະປັກດາບເຂົ້າຂ້າງຂອງຄູ່ຕໍ່ສູ້ ພວກເຂົາໄດ້ລົ້ມຕາຍພ້ອມກັນໝົດທຸກ
ຄົນ ພວກເຂົາຈຶ່ງເອີ້ນບ່ອນນັ້ນວ່າ ເຮັນກາດ-ຮັດຊູຣິມ "ທົ່ງນາຄົມດາບ" ຢູ່ໃນແຂວງ ກິເບ-
ໂອນ.

17ການສູ້ຮົບໃນມື້ນັ້ນດຸເດືອດຫລາຍ ອັບເນ ແລະພວກຄົນອິສຣາເອນກໍພ່າຍແພ້ຕໍ່ໜ້າຂ້າ-
ລາຊະການຂອງກະສັດ ດາວິດ 18ຢູ່ບ່ອນນັ້ນມີລູກຊາຍຂອງນາງ ເຊຣູຢາ 3 ຄົນ ຄື ໂຢອາບ
ອາບີຊາຍ ແລະ ອາສາເຮນ ຝ່າຍ ອາສາເຮນ ນັ້ນຕີນຂອງລາວແລ່ນໄວຫລາຍເໝືອນກັບໂຕ
ຟານປ່າທີ່ຢູ່ໃນປ່າ 19ແລະ ອາສາເຮນກໍໄລ່ຕາມອັບເນໄປ ໃນເວລາທີ່ໄລ່ຕາມໄປນັ້ນ ລາວບໍ່
ໄດ້ລ້ຽວຂວາ ຫຼືລ້ຽວຊ້າຍອອກຈາກອັບເນ ເລີຍ.

## ອັບເນຂ້າອາສາເຮນ

20ອັບເນຫລຽວເບິ່ງທາງຫຼັງ ແລະຖາມວ່າ "ເຈົ້າແມ່ນອາສາເຮນບໍ?" ລາວຕອບວ່າ "ແມ່ນ
ຂ້ອຍເອງ" 21ອັບເນຈຶ່ງບອກລາວວ່າ "ຈົ່ງລ້ຽວໄປທາງຂວາ ຫລືທາງຊ້າຍ ແລະຈັບເອົາຄົນໜຸ່ມ
ຄົນໜຶ່ງແລ້ວເອົາອາວຸດຂອງຜູ້ນັ້ນສຳລັບເຈົ້າເທີ້ນ" ແຕ່ອາສາເຮນບໍ່ລ້ຽວໜີຈາກການໄລ່ຕາມ
ອັບເນ 22ອັບເນໄດ້ບອກອາສາເຮນອີກວ່າ "ຈົ່ງຖອຍຫລັງກັບຈາກການຕາມຂ້ອຍຈະໃຫ້ຂ້ອຍ
ຟາດເຈົ້າໃຫ້ຕາຍລົງ ດິນຊັ້ນບໍ? ແລ້ວຂ້ອຍຈະເງີຍໜ້າຂຶ້ນເບິ່ງ ໂຢອາບ ອ້າຍຂອງເຈົ້າໄດ້ຢ່າງ-
ໃດ?" 23ແຕ່ລາວປະຕິເສດບໍ່ຍອມຖອຍຫລັງກັບ ເພາະສະນັ້ນອັບເນກໍເອົາໂຄນຫອກແທງທ້ອງ
ອາສາເຮນ ຫອກກໍຊອດອອກທາງຫລັງ, ແລ້ວລາວກໍລົ້ມລົງຕາຍຢູ່ບ່ອນນັ້ນ ເມື່ອຄົນທັງຫລາຍ
ໄດ້ມາຮອດບ່ອນ ອາສາເຮນລົ້ມຕາຍຢູ່ກໍຢຸດ ແລະຢືນມິດຢູ່.

24ແຕ່ໂຢອາບກັບອາບີຊາຍໄລ່ຕາມອັບເນໄປ ຕາເວັນກໍຕົກເມື່ອລາວມາຮອດພູນ້ອຍອຳມາ
ທີ່ຢູ່ຕໍ່ໜ້າ ກີອາ ຕາມທາງທີ່ຈະໄປຖິ່ນແຫ້ງແລ້ງກັນດານເມືອງ ກິເບໂອນ 25ແລະລູກຫຼານ ເບັນ-
ຢາມິນກໍໄດ້ໂຮມກັນເພື່ອໄລ່ຕິດຕາມອັບເນເປັນກອງທັບດຽວ ແລະພວກເຂົາໄດ້ຢືນຢູ່ທີ່ຈອມພູ
ນ້ອຍໜ່ວຍໜຶ່ງ.

26ແລ້ວອັບເນຮ້ອງໃສ່ໂຢອາບວ່າ "ພວກເຮົາຈະຕ້ອງສູ້ຮົບກັນຕະຫລອດໄປບໍ? ທ່ານບໍ່ຮູ້ບໍ
ວ່າມັນຈະເປັນຄວາມຂົມຂື່ນທີ່ສຸດໃນຕອນສຸດທ້າຍ, ຍັງອີກດົນປານໃດທ່ານຈຶ່ງຈະບອກຄົນ
ຂອງທ່ານໃຫ້ເຊົາໄລ່ຕາມພີ່ນ້ອງຂອງພວກເຂົາ" 27ແລະ ໂຢອາບ ຈຶ່ງກ່າວວ່າ "ພຣະເຈົ້າຊົງ
ພຣະຊົນຢູ່ສັນໃດ ຖ້າທ່ານບໍ່ກ່າວຂຶ້ນໃນມື້ເຊົ້ານີ້ ຄົນທັງຫຼາຍກໍຈະເລີກໄລ່ຕາມພວກພີ່ນ້ອງຂອງ
ພວກເຂົາທຸກຄົນ" 28ໂຢອາບຈຶ່ງເປົ່າແກຂຶ້ນ ແລະຄົນທັງປວງກໍຢຸດ ແລະພວກເຂົາບໍ່ໄລ່ຕາມອິ-
ສຣາເອນຕໍ່ໄປອີກ ແລະບໍ່ໄດ້ສູ້ຮົບກັນ ອີກ 29ອັບເນກັບຄົນຂອງເພິ່ນກໍເດີນທາງຕະຫລອດຄືນ
ນັ້ນໃນທົ່ງພຽງ ແລະໄດ້ຂ້າມແມ່ນ້ຳຢໍແດນ ແລະເດີນທາງທົ່ວ ແຂວງ ບິດໂຣນ ຈົນມາຮອດ
ເມືອງ ມາຮານາຢິມ.

30ໂຢອາບກໍກັບມາຈາກການໄລ່ຕາມອັບເນ ເມື່ອເພິ່ນທ້ອນໂຮມປະຊາຊົນເຂົ້າກັນແລ້ວ ຂ້າ-
ລາຊະການ ທະຫານຂອງ ດາວິດກໍຂາດໄປສິບເກົ້າຄົນພ້ອມທັງອາສາເຮນ 31ແຕ່ຂ້າລາຊະການ

ຂອງ ດາວິດ ໄດ້ຂ້າຄົນ ເບັນຢາມິນ ແລະຄົນຂອງ ອັບເນ ສາມຮ້ອຍຫົກສິບຄົນ [32]ແລະພວກເຂົາ
ນຳເອົາສົບ ອາສາເຮນ ໄປຝັງໄວ້ໃນອຸບໂມງພໍ່ຂອງລາວຊຶ່ງຢູ່ທີ່ເມືອງ ເບັດເລເຮັມ ໂຢອາບ ແລະ
ພວກຂອງ ເພິ່ນກໍເດີນທາງຕະຫລອດຄືນໄປແຈ້ງຢູ່ທີ່ເມືອງ ເຮັບໂຣນ

## ບົດທີ 3

[1]ເປັນເວລາດົນນານທີ່ຄອບຄົວຂອງ ຊາອູນ ໄດ້ຕໍ່ສູ້ກັບຄອບຄົວຂອງ ດາວິດ ແລະກະສັດ ດາ-
ວິດກໍເຂັ້ມແຂງຫລາຍຂຶ້ນສ່ວນຄອບຄົວຂອງ ຊາອູນກໍເສື່ອມນ້ອຍຖອຍລົງ.

### ດາວິດມີລູກຊາຍຫົກຄົນທີ່ເມືອງເຮັບໂຣນ

[2]ດາວິດ ມີລູກຊາຍຫລາຍຄົນທີ່ເກີດຢູ່ເມືອງ ເຮັບໂຣນ ລູກຊາຍຫົວປີຊື່ ອຳໂນນ ລູກນາງ ອາ-
ຮີໂນອາມ ຊາວ ເຢດຊະເຣເອນ [3]ຜູ້ທີ່ສອງຊື່ ກີເລອາບ ລູກນາງ ອາບີກາຍ ແມ່ໝ້າຍຂອງ ນາ-
ບານ ຊາວ ກາເມນ ແລະຜູ້ທີ່ສາມຊື່ ອັບຊາໂລມ ລູກ ຊາຍຂອງນາງ ມາອາກາ ລູກສາວຂອງ
ຕານມາຍ ກະສັດເມືອງ ເກຊູ [4]ຜູ້ທີ່ສີ່ຊື່ ອາໂດນີຢາ ລູກຊາຍນາງ ຮັກກິດ; ຜູ້ທີ່ຫ້າຊື່ ເຊຟາຕີຢາ
ລູກຊາຍນາງ ອາບີຕານ [5]ແລະຜູ້ທີ່ຫົກຊື່ ອິດເຣອາມ ລູກນາງ ເອັກລາ ເມຍຂອງ ດາວິດ. ລູກ
ຊາຍເຫລົ່ານີ້ເກີດແກ່ດາວິດ ທີ່ເມືອງ ເຮັບໂຣນ.
[6]ຢູ່ມາ ເມື່ອຄອບຄົວຂອງ ຊາອູນ ໄດ້ຕໍ່ສູ້ກັບຄອບຄົວຂອງ ດາວິດນັ້ນ ອັບເນ ເຮັດຕົວໃຫ້ເຂັ້ມ-
ແຂງຫລາຍຂຶ້ນໃນຄອບຄົວຂອງ ຊາອູນ.

### ອັບເນປະຖິ້ມອິດໂບເຊດໄປຕິດຕາມດາວິດ

[7]ຝ່າຍ ຊາອູນ ນັ້ນມີເມຍນ້ອຍຄົນໜຶ່ງຊື່ ຣິດຊະປາ ລູກສາວຂອງ ອາອີຢາ ແລະ ອິດໂບເຊດ
ຖາມອັບເນວ່າ "ເຫດໃດທ່ານຈຶ່ງເຂົ້າໄປສົມສູ່ກັບເມຍນ້ອຍພໍ່ຂອງເຮົາ."
[8]ຝ່າຍ ອັບເນກໍຮ້າຍ ອິດໂບເຊດຢ່າງແຮງ ເພາະຖ້ອຍຄຳນີ້ຈຶ່ງທູນວ່າ "ຂ້າພະອົງເປັນຫົວໝາ
ບໍ? ຊຶ່ງທຸກມື້ນີ້ຂ້າພະອົງໄດ້ຕໍ່ຕ້ານ ຢູດາ ໂດຍສະແດງຄວາມເມດຕາຕໍ່ເຊື້ອສາຍຂອງ ຊາອູນ ພໍ່
ຂອງພະອົງ ແລະຕໍ່ພີ່ນ້ອງ ແລະຕໍ່ມິດສະຫາຍພໍ່ຂອງທ່ານ ບໍ່ໄດ້ມອບພະອົງໄວ້ໃນມືຂອງ ດາ-
ວິດ ມື້ນີ້ພະອົງຍັງຫາຄວາມຕໍ່ຂ້າພະອົງດ້ວຍເລື່ອງຜູ້ຍິງຄົນນີ້ [9]ຖ້າຂ້າພະອົງຈະບໍ່ໄດ້ເຮັດເພື່ອ
ດາວິດ ໃຫ້ສຳເລັດດັ່ງທີ່ ພຣະຜູ້ເປັນເຈົ້າ ຊົງປະຕິຍານໄວ້ແກ່ທ່ານແລ້ວ ກໍຂໍ ພຣະເຈົ້າ ຊົງລົງໂທດ
ອັບເນ ແລະຫລາຍກວ່ານັ້ນອີກ [10]ຄືຂ້າພະອົງຈະຍ້າຍລາຊະອານາຈັກຈາກເຊື້ອສາຍຂອງ ຊາ-
ອູນ ແລະສະຖາປະນາບັນລັງຂອງ ດາວິດ ປົກຄອງ ອິສຣາເອນ ແລະປົກຄອງ ຢູດາ ຕັ້ງແຕ່
ດານ ຮອດ ເບເອ-ເຊບາ" [11]ແລ້ວ ອິດໂບເຊດ ກໍເກີດຄວາມຢ້ານກົວຕໍ່ ອັບເນ ຫລາຍ ໂດຍບໍ່ຊົງ
ຕອບຫຍັງຕໍ່ ອັບເນ ເລີຍ.
[12]ອັບເນ ກໍສົ່ງຕົວແທນຂອງຕົນໄປຫາ ດາວິດ ທູນວ່າ "ແຜ່ນດິນນີ້ເປັນຂອງຜູ້ໃດ?" ແລະທູນ
ອີກວ່າ "ຂໍຈົ່ງເຮັດ ສັນຍາກັບຂ້າພະອົງ ແລະມືຂອງຂ້າພະອົງຈະຢູ່ຝ່າຍພະອົງ ເພື່ອຈະນຳອິ-
ສຣາເອນ ທັງໝົດມາຢູ່ຝ່າຍທ່ານ" [13]ດາວິດ ກ່າວວ່າ "ດີແລ້ວ ເຮົາຈະເຮັດສັນຍາກັບທ່ານ ແຕ່
ເຮົາມີເງື່ອນໄຂຢ່າງໜຶ່ງຄືວ່າຖ້າທ່ານຈະເຫັນໜ້າເຮົາ ອີກຂໍທ່ານນຳ ມີການ ລູກສາວຂອງ ຊາອູນ
ມາໃຫ້ເຮົາກ່ອນ ບໍ່ດັ່ງນັ້ນ ທ່ານຈະບໍ່ໄດ້ເຫັນໜ້າເຮົາ."

[14]ແລ້ວ ດາວິດ ກໍສົ່ງຜູ້ສົ່ງຂ່າວໄປບອກ ອິດໂບເຊດ ລູກຊາຍຂອງ ຊາອູນ ວ່າ "ຂໍມອບ ມີການ
ເມຍຂອງຂ້າພະເຈົ້າ ແກ່ຂ້າພະເຈົ້າຜູ້ຊຶ່ງຂ້າພະເຈົ້າໄດ້ໝັ້ນໄວ້ດ້ວຍໜັງປາຍອະໄວຍາວະລັບ
ຂອງຄົນ ຟີລິດສະຕິນ ໜຶ່ງຮ້ອຍຄົນ" [15]ອິດໂບເຊດ ຈຶ່ງໃຫ້ຄົນໄປນຳເອົາມີການມາຈາກຜົວຂອງ
ນາງຄື ປັນຕິເອນ ລູກຊາຍຂອງ ລາອິດ [16]ແຕ່ຜົວຂອງນາງໄດ້ໄປນຳ ແລະຍ່າງຕາມຫລັງນາງ
ທັງຮ້ອງໄຫ້ໄປຈົນຮອດ ບາຮູຣິມ ແລ້ວອັບເນ ຈຶ່ງບອກຜົວນາງວ່າ "ກັບໄປສາ" ແລະລາວກໍກັບ
ໄປ.

[17]ອັບເນ ຈຶ່ງປຶກສາກັບພວກຜູ້ໃຫຍ່ຂອງ ອິສຣາເອນ ວ່າ "ແຕ່ກ່ອນພວກທ່ານຊອກຫາ ດາວິດ
ເພື່ອເປັນກະສັດປົກຄອງພວກທ່ານ. [18]ບັດນີ້ ຈົ່ງໃຫ້ເປັນຈິງເທີ້ນ ເພາະວ່າພຣະຜູ້ເປັນເຈົ້າຊົງ
ກ່າວເຖິງ ດາວິດ ວ່າ 'ເຮົາຈະຊ່ວຍ ອິສຣາເອນ ປະຊາຊົນຂອງເຮົາໃຫ້ພົ້ນຈາກມືຂອງຄົນ ຟີລິດ-
ສະຕິນ ແລະໃຫ້ພົ້ນຈາກມືສັດຕູທັງຫຼາຍຂອງພວກເຂົາດ້ວຍມືຂອງ ດາວິດ ຜູ້ຮັບໃຊ້ຂອງເຮົາ.'"
[19]ອັບເນ ກໍເວົ້າກັບຕະກູນ ເບັນຢາມິນ ດ້ວຍ ແລະ ອັບເນ ກໍໄປທູນ ດາວິດ ທີ່ເມືອງ ເຮັບໂຣນ
ເຖິງບັນດາສິ່ງຕ່າງໆທີ່ ອິສຣາເອນ ແລະເຊື້ອສາຍທັງໝົດຂອງ ເບັນຢາມິນ ເຫັນດີ [20]ອັບເນ ຈຶ່ງ
ໄປຫາກະສັດ ດາວິດ ທີ່ເມືອງ ເຮັບໂຣນ ພ້ອມກັບຄົນອີກຊາວຄົນ, ກະສັດ ດາວິດ ໄດ້ຈັດງານລ້ຽງ
ໃຫ້ ອັບເນ ແລະຄົນທັງຫລາຍທີ່ໄປນຳເພິ່ນ [21]ແລະ ອັບເນ ທູນ ດາວິດ ວ່າ "ຂ້ານ້ອຍຈະກັບໄປ
ແລະຈະທ້ອນໂຮມຄົນ ອິສຣາເອນ ທັງໝົດມາຫາກະສັດ ເຈົ້ານາຍຂອງຂ້ານ້ອຍ ເພື່ອພວກເຂົາ
ທັງຫລາຍຈະເຮັດສັນຍາກັບພະອົງ ແລະພະອົງຈະຊົງປົກຄອງໃຫ້ກວ້າງຂວາງຕາມຈິດໃຈຂອງ
ພະອົງປາດຖະໜາ" ດາວິດກໍຊົງສົ່ງ ອັບເນກັບໄປ ແລະລາວກໍໄປໂດຍສັນຕິພາບ.
[22]ເບິ່ງ ແມ ຂະນະນັ້ນຂ້າລາຊະການຂອງ ດາວິດ ກັບ ໂຢອາບ ໄດ້ກັບມາຈາກການໄປປຸ້ນ
ແລະນຳສິ່ງຂອງທີ່ຍຶດໄດ້ຢ່າງຫລວງຫລາຍນັ້ນມານຳ ແຕ່ອັບເນບໍ່ໄດ້ຢູ່ກັບ ດາວິດທີ່ ເຮັບໂຣນ
ແລ້ວ ເພາະພະອົງຊົງສົ່ງເພິ່ນກັບໄປ ແລະເພິ່ນກໍໄປໂດຍສັນຕິພາບ [23]ເມື່ອ ໂຢອາບ ກັບກອງ-
ທັບທັງໝົດທີ່ຢູ່ກັບຕົນມາຮອດ ກໍມີຄົນບອກ ໂຢອາບ ວ່າ "ອັບເນ ລູກຊາຍຂອງ ເນ ມາເຝົ້າກະສັດ
ແລະພະອົງຊົງໃຫ້ລາວກັບໄປລາວກໍກັບໄປໂດຍສັນຕິພາບ."
[24]ແລ້ວ ໂຢອາບ ເຂົ້າໄປເຝົ້າກະສັດທູນວ່າ "ພະອົງຊົງເຮັດຫຍັງເຊັ່ນນັ້ນ ເບິ່ງແມ ອັບເນມາ
ເຝົ້າພະອົງ ເຫດໃດພະອົງຈຶ່ງປ່ອຍໃຫ້ລາວໄປ ລາວໄດ້ຫລຸດມືໄປແລ້ວ [25]ພະອົງຊົງຮູ້ແລ້ວວ່າ
ອັບເນ ລູກຊາຍຂອງ ເນ ມາເພື່ອຫລອກລວງພະອົງ ແລະເພື່ອຮູ້ເຖິງການສະເດັດເຂົ້າອອກຂອງ
ພະອົງ ແລະເພື່ອຮູ້ທຸກສິ່ງທຸກຢ່າງທີ່ພະອົງຊົງກະທຳ."
[26]ເມື່ອ ໂຢອາບ ອອກມາຈາກການເຂົ້າເຝົ້າ ດາວິດ ຈຶ່ງສົ່ງຄົນໄປຕາມອັບເນ ພວກເຂົາກໍນຳ
ເອົາອັບເນກັບມາຈາກນ້ຳສ້າງຊື່ສີຣາ ແຕ່ດາວິດບໍ່ຮູ້ເລື່ອງນີ້.

## ໂຢອາບຂ້າອັບເນ

[27]ແລະ ເມື່ອ ອັບເນ ກັບມາຮອດ ເຮັບໂຣນ ແລ້ວ ໂຢອາບ ກໍພາເພິ່ນຫລົບເຂົ້າໄປທາງປະຕູ
ເມືອງເພື່ອຈະເວົ້າກັບເພິ່ນເປັນການລັບ ແລະ ໂຢອາບ ແທງທ້ອງຂອງ ອັບເນ ເພິ່ນກໍສິ້ນຊີວິດ
ໂຢອາບ ໄດ້ແກ້ແຄ້ນແທນເລືອດຂອງ ອາສາເຮນ ນ້ອງຊາຍຂອງຕົນ.
[28]ຫລັງຈາກນັ້ນ ເມື່ອ ດາວິດ ໄດ້ຍິນເລື່ອງນີ້ ພະອົງກ່າວວ່າ "ຕົວເຮົາ ແລະລາຊະອານາຈັກ

ຂອງ ເຮົາບໍ່ມີຄວາມຜິດສືບໄປ ເປັນນິດຕໍ່ພຣະພັກ ພຣະຜູ້ເປັນເຈົ້າ ຍ້ອນ ເລື່ອງ ເລືອດຂອງ ອັບເນ
ລູກຂອງ ເນ 29ຂໍໃຫ້ເລືອດນັ້ນຕົກໃສ່ຫົວຂອງ ໂຢອາບ ແລະຕົກໃສ່ເຊື້ອສາຍພໍ່ຂອງລາວທັງໝົດ
ຂໍໃຫ້ຄອບຄົວຂອງ ໂຢອາບ ເປັນພະຍາດ ແລະມີຄົນທີ່ເປັນພະຍາດຂີ້ທູດ, ຄົນທີ່ຖືໄມ້ເທົ້າ, ຄົນ
ທີ່ຖືກປະຫານດ້ວຍດາບ ຫລືຄົນຂາດອາຫານອຶດຫິວເລື້ອຍໆເທີ້ນ.”

30ນີ້ແຫລະ ໂຢອາບກັບ ອາບີຊາຍ ນ້ອງຊາຍຂອງລາວໄດ້ຂ້າອັບເນ ເພາະອັບເນໄດ້ຂ້າອາ-
ສາເຮນ ນ້ອງຊາຍຂອງລາວໃນເວລາສູ້ຮົບກັນຢູ່ທີ່ ກິເບໂອນ.

31ແລ້ວ ດາວິດ ກໍກ່າວກັບ ໂຢອາບ ແລະປະຊາຊົນທຸກຄົນທີ່ຢູ່ກັບພະອົງວ່າ “ຈົ່ງຈີກເສື້ອຜ້າ
ຂອງພວກທ່ານແລະ ເອົາຜ້າກະສອບຄາດແອວໄວ້ ແລະຈົ່ງໄວ້ທຸກໃຫ້ອັບເນ” ແລະກະສັດ
ດາວິດ ກໍສະເດັດຕາມຫລັງໂລງສົບຂອງ ອັບເນ ໄປ 32ພວກເຂົາໄດ້ຝັງສົບ ອັບເນ ໄວ້ທີ່ ເຮັບໂຣນ
ແລະກະສັດໄດ້ຮ້ອງໄຫ້ດ້ວຍສຽງດັງໃນບ່ອນຝັງສົບຂອງ ອັບເນ ແລະປະຊາຊົນທັງປວງກໍຮ້ອງ-
ໄຫ້. 33ແລະກະສັດຊົງຮ້ອງຄາງກ່ຽວກັບ ອັບເນ ວ່າ “ອັບເນ ຕ້ອງຕາຍຄືຄົນໂງ່ຕາຍບໍ? 34ມືຂອງ
ເຈົ້າກໍບໍ່ໄດ້ຖືກມັດ ຕີນຂອງເຈົ້າກໍບໍ່ໄດ້ຖືກລ່າມໂສ້ ເຈົ້າໄດ້ລົ້ມລົງເໝືອນຄົນທີ່ລົ້ມລົງຕໍ່ໜ້າຄົນ
ຊົ່ວຮ້າຍ” ແລະປະຊາຊົນທັງປວງກໍຮ້ອງໄຫ້ເຖິງ ອັບເນ ອີກ 35ແລ້ວປະຊາຊົນທັງປວງກໍມາທູນ
ຊວນ ເຊີນໃຫ້ ດາວິດ ສະເຫວີຍອາຫານ ເມື່ອ ເວລາຍັງ ເວັນຢູ່ ແຕ່ ດາວິດ ຊົງປະຕິຍານວ່າ “ຂໍ
ພຣະເຈົ້າລົງໂທດເຮົາ ແລະຫລາຍກວ່ານັ້ນ ຖ້າເຮົາຊີມເຂົ້າຈີ່ ຫລືສິ່ງໃດໆກ່ອນຕາເວັນຕົກ.”

36ປະຊາຊົນທັງປວງສັງເກດເຫັນເຊັ່ນນັ້ນກໍພໍໃຈດັ່ງທີ່ປະຊາຊົນທັງປວງພໍໃຈທຸກສິ່ງທີ່ກະສັດ
ໄດ້ເຮັດມາ. 37ປະຊາຊົນທັງປວງ ແລະຊົນຊາດ ອິສຣາເອນ ທັງປວງຈຶ່ງ ເຂົ້າໃຈໃນມື້ນັ້ນວ່າບໍ່
ແມ່ນກະສັດທີ່ສັ່ງໃຫ້ຂ້າ ອັບເນ ລູກຊາຍຂອງ ເນ 38ກະສັດກ່າວກັບຂ້າລາຊະການຂອງພະອົງ
ວ່າ, “ເຈົ້າບໍ່ຮູ້ບໍ? ມື້ນີ້ ເຈົ້ານາຍ ແລະຄົນສຳຄັນຄົນໜຶ່ງໄດ້ສິ້ນຊີວິດໃນ ອິສຣາເອນ 39ເຖິງແມ່ນ
ເຮົາໄດ້ຮັບການເຈີມເປັນກະສັດແລ້ວ ເຮົາກໍອ່ອນກຳລັງໃນມື້ນີ້ ແລະຊາຍເຫລົ່ານີ້ຊຶ່ງເປັນລູກ
ຂອງນາງ ເຊຣູຢາ ແຂງກະດ້າງຕໍ່ເຮົາເກີນໄປ ຂໍພຣະຜູ້ເປັນເຈົ້າຕອບແທນແກ່ທຸກຄົນທີ່ເຮັດ
ການຊົ່ວຮ້າຍຕາມການຮ້າຍຂອງພວກເຂົາເທີ້ນ.”

# ບົດທີ 4

## ອິດໂບເຊດຖືກຄາດຕະກຳ

1ເມື່ອ ອິດໂບເຊດ ລູກຊາຍຂອງ ຊາອູນ ໄດ້ຍິນຂ່າວວ່າ ອັບເນ ສິ້ນຊີວິດທີ່ ເມືອງ ເຮັບໂຣນ ມື
ຂອງພະອົງກໍອ່ອນແຮງລົງ ແລະບັນດາພວກ ອິສຣາເອນ ທັງປວງກໍເປັນທຸກໃຈ 2ຝ່າຍລູກຊາຍ
ຂອງ ຊາອູນ ຍັງມີອີກສອງຄົນເປັນຫົວໜ້າຂອງກອງທັບ ຄົນໜຶ່ງຊື່ ບາອານາ ອີກຄົນໜຶ່ງຊື່ ເຣ-
ກາບ ທັງສອງເປັນລູກຊາຍຂອງ ຣິມໂມນ ໃນຈຳພວກລູກຫຼານ ເບັນຢາມິນ ຊາວເມືອງ ເບເອໂຣດ
ເພາະວ່າ ເມືອງ ເບເອໂຣດ ກໍນັບເຂົ້າເປັນຂອງ ເບັນຢາມິນ ຄືກັນ 3ຊາວ ເບເອໂຣດ ໜີໄປຍັງ ເມືອງ
ກິດຕາຢິມ ແລະອາໄສຢູ່ບ່ອນນັ້ນຈົນຮອດທຸກມື້ນີ້.

4ໂຢນາທານ ລູກຊາຍຂອງຊາອູນ ມີລູກຊາຍຄົນໜຶ່ງເປັນງ່ອຍ; ໃນເວລາທີ່ລາວມີອາຍຸຫ້າປີ
ເມື່ອມີຂ່າວ ເລື່ອງ ຊາອູນ ກັບ ໂຢນາທານ ມາຈາກ ເຢດຊະເຣເອນ ແມ່ລ້ຽງກໍອຸ້ມລຸກຂຶ້ນໜີໄປ ໃນ

ເວລານາງຟ້າວໜີໄປນັ້ນເດັກນັ້ນໄດ້ຕົກລົງ ແລະເປັນງ່ອຍ ເພິ່ນຊື່ເມຟີໂບເຊັດ.
[5]ຝ່າຍລູກຊາຍທັງສອງຂອງຣິມໂມນ ຊາວເບເອໂຣດ ທີ່ຊື່ເຣກາບ ແລະບາອານານັ້ນໄດ້
ອອກເດີນທາງ ເມື່ອແດດອອກກ້າ ກໍມາຮອດພະລາຊະວັງຂອງອິດໂບເຊດຂະນະທີ່ພະອົງກຳ-
ລັງນອນພັກທ່ຽງຢູ່ [6]ແລະພວກເຂົາທັງສອງເຂົ້າໄປໃນພະລາຊະວັງເຮັດຄືຈະໄປຂົນເຂົ້າວີດ
ແລະແທງທ້ອງຂອງພະອົງແລ້ວ ເຣກາບ ແລະບາອານາ ອ້າຍຂອງຕົນກໍປົບໜີໄປ.
[7]ເວລາທີ່ພວກເຂົາທັງສອງເຂົ້າໄປໃນພະລາຊະວັງນັ້ນກະສັດກຳລັງນອນຫລັບຢູ່ເທິງຕຽງໃນ
ຫ້ອງນອນ ລາວໄດ້ຕົບຕີພະອົງ, ຂ້າພະອົງ ແລະຕັດເອົາຫົວຂອງພະອົງ ແລະເອົາຫົວນັ້ນໄປ
ນຳໂດຍເດີນທາງໝົດຄືນໃນທາງທົ່ງພຽງ [8]ແລະລາວນຳຫົວຂອງອິດໂບເຊດໄປຖວາຍດາວິດທີ່
ເມືອງເຮັບໂຣນ ພວກເຂົາທັງສອງກາບທູນກະສັດວ່າ “ອັນນີ້ເປັນຫົວຂອງອິດໂບເຊດລູກຂອງ
ຊາອູນສັດຕູຂອງທ່ານ ຜູ້ຊອກຫາຂ້າຊີວິດຂອງພະອົງ ໃນມື້ນີ້ພຣະຜູ້ເປັນເຈົ້າຊົງແກ້ແຄ້ນແທນ
ກະສັດເຈົ້ານາຍຂອງຂ້ານ້ອຍເໜືອຊາອູນ ແລະເຊື້ອສາຍຂອງຊາອູນ.”
[9]ແຕ່ດາວິດກ່າວຕອບເຣກາບ ແລະບາອານາອ້າຍຂອງລາວ ລູກຊາຍຂອງຣິມໂມນຊາວ
ເບເອໂຣດວ່າ “ພຣະຜູ້ເປັນເຈົ້າຊົງພຣະຊົນຢູ່ສັນໃດ ພຣະອົງຜູ້ຊົງໄຖ່ຊີວິດຈິດໃຈຂອງເຮົາໃຫ້
ພົ້ນຈາກຄວາມຂັດສົນທຸກຢ່າງ [10]ເມື່ອຜູ້ໜຶ່ງຜູ້ໃດມາບອກເຮົາວ່າ ‘ເບິ່ງແມ ຊາອູນຕາຍແລ້ວ’
ແລະຄິດວ່າຕົນນຳຂ່າວດີມາ ເຮົາກໍຈັບຄົນນັ້ນຂ້າທີ່ເມືອງຊິກລັກຊຶ່ງເປັນຄ່າຈ້າງແກ່ຂ່າວດີຂອງ
ຕົນ [11]ຫລາຍກວ່ານັ້ນອີກ ເມື່ອຄົນຊົ່ວຮ້າຍໄດ້ຂ້າຄົນຊອບທຳໃນເຮືອນ ແລະເທິງບ່ອນນອນຂອງ
ຄົນຊອບທຳນັ້ນ ບັດນີ້ເຮົາຈະບໍ່ຮຽກຮ້ອງເລືອດຂອງລາວຈາກມືຂອງເຈົ້າທັງສອງບໍ? ແລະຈະບໍ່
ທຳລາຍເຈົ້າຈາກແຜ່ນດິນໂລກບໍ?”
[12]ແລະດາວິດສັ່ງພວກຄົນໜຸ່ມຂອງພະອົງ ແລະພວກເຂົາໄດ້ນຳໄປຂ້າ ຕັດມືຕັດຕີນອອກ
ແຂວນສົບໄວ້ຂ້າງໜອງນໍ້າເມືອງເຮັບໂຣນ ແລະພວກເຂົາໄດ້ນຳເອົາຫົວຂອງອິດໂບເຊດໄປຝັງ
ໄວ້ໃນບ່ອນຝັງສົບຂອງອັບເນໃນເມືອງເຮັບໂຣນ.

# ບົດທີ 5

## ດາວິດເປັນເຈົ້າຊີວິດແຫ່ງອິສຣາເອນ ແລະ ຢູດາ

[1]ຕໍ່ມາອີກ ພວກຕະກູນອິສຣາເອນ ໄດ້ມາຫາດາວິດທີ່ເມືອງເຮັບໂຣນ ແລະທູນຕໍ່ພະອົງ
ວ່າ, “ພວກຂ້ານ້ອຍເປັນເພື່ອນຮ່ວມຊາດດຽວກັນກັບພະອົງ ໃນຄາວກ່ອນ ເມື່ອຊາອູນເປັນເຈົ້າ
ຊີວິດ. [2]ແມ່ນພະອົງນີ້ແຫລະ ໄດ້ນຳໜ້າປະຊາຊົນອິສຣາເອນຢູ່ໃນສະໜາມຮົບ ຕັ້ງແຕ່ເວລາ
ນັ້ນມາ ພຣະຜູ້ເປັນເຈົ້າກໍຊົງບອກໃຫ້ພະອົງເປັນຜູ້ນຳໜ້າ ແລະປົກຄອງໄພ່ພົນຂອງພຣະອົງ.
[3]ດ້ວຍເຫດນີ້ ພວກຂ້ານ້ອຍຜູ້ນຳຊາວອິສຣາເອນທຸກຄົນ ຈຶ່ງເຂົ້າເຝົ້າພະອົງທີ່ເມືອງເຮັບ-
ໂຣນນີ້” ຝ່າຍດາວິດກໍໃຫ້ຄຳໝັ້ນສັນຍາກັບພວກເຂົາ ແລະພວກເຂົາກໍເອົານໍ້າມັນທົດສົງພະອົງ
ໃຫ້ເປັນເຈົ້າຊີວິດຂອງລາຊະອານາຈັກອິສຣາເອນ. [4]ເວລາທີ່ດາວິດໄດ້ຂຶ້ນສະເຫວີຍລາດນັ້ນ
ພະອົງມີອາຍຸສາມສິບປີ ແລະພະອົງປົກຄອງເປັນເວລາສີ່ສິບປີ. [5]ຄືປົກຄອງຊາວຢູດາທີ່ເຮັບ-
ໂຣນເປັນເວລາເຈັດປີກັບຫົກເດືອນ ແລະໄດ້ປົກຄອງທີ່ກຸງເຢຣູຊາເລັມທົ່ວທັງອິສຣາເອນ

ແລະຢູດາ ເປັນເວລາສາມສິບສາມປີ.
[6]ຕໍ່ມາກະສັດດາວິດ ແລະທະຫານຂອງພະອົງ ໄດ້ໄປສູ້ຮົບທີ່ນະຄອນເຢຣູຊາເລັມ ຊາວ
ເຢບຸດທີ່ຢູ່ໃນທີ່ນັ້ນ ຄິດວ່າ ດາວິດບໍ່ສາມາດຈະຕີເອົາເມືອງນີ້ໄດ້ ພວກເຂົາຈຶ່ງເວົ້າຕໍ່ພະອົງວ່າ,
"ພະອົງຈະເຂົ້າມາໃນບ່ອນນີ້ບໍ່ໄດ້ດອກ ແມ່ນແຕ່ຄົນຕາບອດ ແລະຄົນເສຍອົງຄະກໍຈະສາມາດ
ປ້ອງກັນເມືອງນີ້ໄວ້ໄດ້."
[7]ແຕ່ດາວິດກໍໄດ້ຍຶດເອົາປ້ອມຍາມເມືອງຊີໂອນ ແລະບ່ອນນີ້ກໍກາຍເປັນເມືອງຂອງດາວິດ.
[8]ໃນມື້ນັ້ນ ດາວິດເວົ້າກັບທະຫານຂອງພະອົງວ່າ "ດຽວນີ້ຂ້ອຍກຽດຊັງຊາວເຢບຸດຫລາຍ ຢູ່ນີ້ມີ
ໃຜແດ່ທີ່ຄິດຄືກັນກັບຂ້ອຍ ຂໍໃຫ້ພວກທີ່ເຫັນດີກັບຂ້ອຍເຂົ້າໄປທາງທໍ່ນໍ້າໃຕ້ດິນ ແລະໄປໂຈມຕີ
ກັບພວກທີ່ເອີ້ນວ່າ ເປັນຄົນຕາບອດ ແລະຄົນເສຍອົງຄະນັ້ນ" (ດ້ວຍເຫດນີ້ ຈຶ່ງມີຄຳເວົ້າວ່າ
ຄົນຕາບອດ ແລະຄົນເສຍອົງຄະເຂົ້າໄປໃນພຣະວິຫານຂອງພຣະຜູ້ເປັນເຈົ້າບໍ່ໄດ້).
[9]ສ່ວນດາວິດ ກໍຢູ່ໃນເມືອງທີ່ມີປ້ອມຍາມນັ້ນ ທີ່ພະອົງໄດ້ໃສ່ຊື່ວ່າ, "ເມືອງຂອງດາວິດ" ພະ
ອົງໄດ້ສ້າງກຳແພງປ້ອງກັນອ້ອມໄວ້ ຕັ້ງແຕ່ຄູປ້ອງກັນມິນໂລຈົນຮອດພະລາຊະວັງ. [10]ດາວິດ
ເຂັ້ມແຂງ ແລະຈະເລີນຂຶ້ນຕະຫລອດມາ ເພາະວ່າພຣະຜູ້ເປັນເຈົ້າແຫ່ງຈັກກະວານ ໄດ້ຊົງ
ສະຖິດຢູ່ກັບພະອົງ.
[11]ຢູດາ ກະສັດຮີຣາມທີ່ເມືອງຕີເຣ ໄດ້ສົ່ງພວກລາຊະທູດມາຫາດາວິດ. [12]ພ້ອມທັງໄມ້ສົນ
ຊ່າງໄມ້ ຊ່າງກໍ່ມາສ້າງພະລາຊະວັງຂອງດາວິດ ດາວິດຈຶ່ງພິຈາລະນາວ່າ ພຣະຜູ້ເປັນເຈົ້າຊົງ
ສະຖາປານາຕົນໃຫ້ເປັນເຈົ້າຊີວິດຂອງຊາວອິສຣາເອນ ແລະຊົງແຕ່ງຕັ້ງລາຊະອານາຈັກຂອງ
ພະອົງໃຫ້ຮັ່ງມີຮຸ່ງເຮືອງ ເພາະເຫັນແກ່ໄພ່ພົນຂອງພຣະອົງ. [13]ຫລັງຈາກຍ້າຍໜີຈາກເມືອງ
ເຮັບໂຣນແລ້ວ ດາວິດກໍເອົາເມຍນ້ອຍຫລາຍຄົນໃນນະຄອນເຢຣູຊາເລັມ ພະອົງຈຶ່ງມີລູກຊາຍ
ລູກສາວຕື່ມຫລາຍຂຶ້ນ. [14]ລູກທີ່ເກີດຢູ່ນະຄອນເຢຣູຊາເລັມມີຄື ຊາມມູອາ ໂຊບາບ ນາທານ
ໂຊໂລໂມນ. [15-16]ອີບຣາ ເອລີຊູອາ ເນເຟັກ ຢາເຟຍ ເອລີຊາມາ ເອລີອາດາ ແລະເອລີເຟ-
ເລັດ.

## ດາວິດຊະນະພວກຟີລິດສະຕິນ

[17]ເມື່ອພວກຟີລິດສະຕິນໄດ້ຍິນຂ່າວວ່າ ດາວິດໄດ້ຮັບການສະຖາປານາໃຫ້ເປັນເຈົ້າຊີວິດ
ຂອງຊາວອິສຣາເອນ ພວກເຂົາກໍແຫ່ກັນມາເພື່ອຈັບເອົາຕົວດາວິດ ເມື່ອດາວິດໄດ້ຍິນຂ່າວນັ້ນ
ພະອົງລົງໄປໃນປ້ອມ. [18]ເມື່ອພວກຟີລິດສະຕິນເຄື່ອນກຳລັງມາຮອດຮ່ອມພູເຣຟາຢິມ ກໍໄດ້
ຍຶດເອົາບ່ອນນັ້ນໄວ້. [19]ດາວິດໄດ້ທູນຖາມພຣະຜູ້ເປັນເຈົ້າວ່າ, "ຂ້ານ້ອຍຈະຕ້ອງໄປສູ້ຮົບກັບ
ພວກຟີລິດສະຕິນບໍ? ພຣະອົງຈະຊົງປະທານໄຊຊະນະໃຫ້ຂ້ານ້ອຍບໍ?" ພຣະຜູ້ເປັນເຈົ້າຊົງ
ຕອບວ່າ, "ຈົ່ງໄປສາ ເຮົາຈະໃຫ້ເຈົ້າຊະນະ."
[20]ດັ່ງນັ້ນ ດາວິດຈຶ່ງມຸ່ງໜ້າໄປເມືອງບາອານ-ເປຣາຊິມ ແລະຊະນະພວກຟີລິດສະຕິນ ພະ
ອົງໄດ້ເວົ້າວ່າ, "ພຣະຜູ້ເປັນເຈົ້າຊົງໃຫ້ສັດຕູຂອງຂ້າພະເຈົ້າແຕກແຍກກັນ ເໝືອນດັ່ງນໍ້າໄຫລ
ເຊາະຄູກັ້ນນໍ້າ" ແລະບ່ອນນັ້ນກໍເອີ້ນວ່າ ບາອານ-ເປຣາຊິມ. [21]ພວກຟີລິດສະຕິນໄດ້ປະຮູບພະ
ຂອງພວກເຂົາໄວ້ໃນບ່ອນນັ້ນ ດາວິດ ແລະທະຫານຂອງພະອົງກໍເອົາຮູບພະນັ້ນອອກໜີໄປ.

22ພວກຟີລິດສະຕິນ ໄດ້ກັບຄືນສູ່ຮ່ອມພູ ເຣຟາອີມ ແລະຍຶດເອົາບ່ອນນັ້ນໄວ້ອີກ. 23ດາວິດກໍ
ກາບທູນ ພຣະຜູ້ເປັນເຈົ້າ ອີກເທື່ອໜຶ່ງ ຈຶ່ງໄດ້ຮັບຄຳຕອບວ່າ, "ຢ່າຕໍ່ສູ້ກັບພວກເຂົາຢູ່ບ່ອນນີ້
ແຕ່ໃຫ້ອ້ອມໄປຕໍ່ສູ້ທາງດ້ານຫລັງ ຊຶ່ງຢູ່ໃກ້ໆ ກັບຕົ້ນມອນນັ້ນ. 24ເມື່ອພວກເຈົ້າໄດ້ຍິນສຽງຕີ
ຄືນຍ່າງຢູ່ເທິງປາຍໄມ້ຈົ່ງຟ້າວອອກໄປຕໍ່ສູ້ໂລດ ເພາະການນັ້ນໝາຍເຖິງວ່າ ເຮົາໄດ້ອອກໄປ
ກ່ອນໜ້າພວກເຈົ້າແລ້ວ ເພື່ອເຮັດໃຫ້ກອງທັບພວກຟີລິດສະຕິນ ເສຍໄຊ." 25ດາວິດກໍປະຕິບັດ
ຕາມທີ່ ພຣະຜູ້ເປັນເຈົ້າ ໄດ້ສັ່ງໄວ້ ພະອົງໄດ້ໄລ່ພວກຟີລິດສະຕິນ ໄປຕະຫລອດທາງ ແຕ່ເມືອງ
ເກບາ ຈົນຮອດເມືອງ ເກເຊ.

# ບົດທີ 6

## ຫີບຄຳສັນຍາຖືກນຳໄປນະຄອນເຢຣູຊາເລັມ

1ດາວິດ ໄດ້ເອີ້ນເອົາທະຫານຜູ້ເກັ່ງກ້າທີ່ສຸດໃນ ອິສຣາເອນ ມາໂຮມກັນອີກເທື່ອໜຶ່ງ ຊຶ່ງມີຈຳ-
ນວນສາມສິບພັນຄົນ. 2ພະອົງໄດ້ພາພວກເຂົາໄປເມືອງ ບາອາເລ ທີ່ຢູ່ໃນປະເທດຢູດາ ເພື່ອ
ໄປນຳເອົາຫີບຄຳສັນຍາຊຶ່ງມີຊື່ຕາມພຣະນາມຂອງ ພຣະຜູ້ເປັນເຈົ້າ ແຫ່ງຈັກກະວານ ຜູ້ຊົງນັ່ງຢູ່
ເທິງພຣະທີ່ນັ່ງລະຫວ່າງກາງ ເທວະດາເຄຣຸບ. 3ພວກເຂົາໄດ້ເອົາຫີບຄຳສັນຍານັ້ນໃສ່ກວຽນໃໝ່
ໄປຈາກເຮືອນຂອງ ອາບີນາດາບ ຢູ່ເທິງພູນ້ອຍ ສ່ວນ ອຸດຊາ ແລະ ອາຮີໂອ ລູກຊາຍຂອງ ອາ-
ບີນາດາບ ເປັນຄົນຈູງກວຽນນັ້ນ. 4ເວລາທີ່ແກ່ຫີບຄຳສັນຍານັ້ນ ອາຮີໂອ ເປັນຜູ້ຍ່າງອອກໜ້າ.
5ດາວິດ ແລະຊາວ ອິສຣາເອນ ທຸກຄົນໄດ້ພາກັນຟ້ອນແລະຮ້ອງເພງຖວາຍແດ່ ພຣະຜູ້ເປັນເຈົ້າ
ຢ່າງສຸດອົກສຸດໃຈ ພວກເຂົາໄດ້ດີດພິນ ຕີກອງ ຕີບແຊ່ງ ແລະຫລິ້ນເຄື່ອງດົນຕີອື່ນໆ ອີກປະ-
ກອບ.

6ເມື່ອພວກເຂົາມາຮອດລານຟາດເຂົ້າຂອງ ນາໂກນ ງົວກໍຕຳສະດຸດ ອຸດຊາຢ້ານວ່າຫີບຄຳ
ສັນຍານັ້ນຈະຕົກຈາກກວຽນ ຈຶ່ງເດ່ມືໄປຈັບໄວ້. 7ໃນທັນໃດນັ້ນ ພຣະຜູ້ເປັນເຈົ້າກໍຊົງພຣະພິ-
ໂລດ ອຸດຊາ ເພາະລາວຂາດຄວາມເຄົາລົບ ອຸດຊາ ຈຶ່ງຕາຍຢູ່ຂ້າງຫີບຄຳສັນຍາໃນບ່ອນນັ້ນ.

8ສ່ວນ ດາວິດກໍໃຈຮ້າຍທີ່ ພຣະຜູ້ເປັນເຈົ້າ ຊົງລົງໂທດ ອຸດຊາ ດ້ວຍພຣະພິໂລດ ດັ່ງນັ້ນ ເພິ່ນ
ຈຶ່ງເອີ້ນບ່ອນນັ້ນວ່າ, "ເປເຣັດ-ອຸດຊາ ຈົນເຖິງທຸກມື້ນີ້." 9ດາວິດ ຢ້ານກົວ ພຣະຜູ້ເປັນເຈົ້າ ຈຶ່ງ
ເວົ້າວ່າ, "ບັດນີ້ ຂ້ອຍຈະຫາມຫີບຄຳສັນຍາໄປໄດ້ຢ່າງໃດ?" 10ດັ່ງນັ້ນ ພະອົງກໍຕັດສິນໃຈບໍ່
ເອົາຫີບຄຳສັນຍາໄປນະຄອນ ເຢຣູຊາເລັມ ພະອົງໄດ້ນຳເອົາໄປເຮືອນຂອງ ໂອເບັດ-ເອໂດມ ທີ່
ມາຈາກເມືອງ ກັດ. 11ຫີບຄຳສັນຍາຈຶ່ງຢູ່ທີ່ນັ້ນເປັນເວລາສາມເດືອນ ແລະ ພຣະຜູ້ເປັນເຈົ້າກໍຊົງ
ອວຍພອນ ໂອເບັດ ພ້ອມທັງຄອບຄົວຂອງລາວ. 12ເມື່ອກະສັດ ດາວິດ ໄດ້ຍິນຂ່າວວ່າ ພຣະຜູ້-
ເປັນເຈົ້າ ຊົງອວຍພອນໃຫ້ແກ່ຄອບຄົວ ໂອເບັດ ແລະທຸກສິ່ງທີ່ລາວມີຍ້ອນຫີບຄຳສັນຍາຢູ່ໃນ
ເຮືອນຂອງລາວ ດາວິດ ຈຶ່ງເອົາຫີບນັ້ນເຮັດພິທີສະຫລອງກັນຢ່າງໃຫຍ່ໂຕມະໂຫລານ. 13ເມື່ອ
ພວກທີ່ມາຫາມຫີບຄຳສັນຍາຍ່າງອອກໄປໄດ້ຫົກກ້າວແລ້ວ ດາວິດກໍເອົາງົວເຖິກ ແລະແບ້ໂຕ
ຕຸ້ຍພີ ຖວາຍເປັນເຄື່ອງບູຊາແກ່ ພຣະຜູ້ເປັນເຈົ້າ. 14ດາວິດ ນຸ່ງຜ້າຟ້ອນຖວາຍພຣະກຽດແດ່
ພຣະຜູ້ເປັນເຈົ້າຢ່າງສຸດອົກສຸດໃຈ. 15ແລ້ວພະອົງກັບຊາວ ອິສຣາເອນທຸກຄົນ ກໍນຳຫີບຄຳສັນ-

ຍາຂຶ້ນໄປນະຄອນ ເຢຣູຊາເລັມ ດ້ວຍສຽງໂຫ່ຮ້ອງຍິນດີ ແລະທັງສຽງເປົ່າແກດ້ວຍ.
16ເມື່ອຫີບຄຳສັນຍາເຂົ້າມາຮອດເມືອງ ມີການ ລູກສາວຂອງຊາອູນ ຜູ້ເປັນມະເຫສີໄດ້ຫລຽວ
ອອກໄປທາງປ່ອງຢ້ຽມ ກໍເຫັນກະສັດດາວິດກຳລັງຟ້ອນ ແລະໂດດເຕັ້ນຊ້ອງພຣະພັກພຣະຜູ້-
ເປັນເຈົ້າ ນາງກໍຄິດໝິ່ນປະໝາດດາວິດໃນໃຈ. 17ພວກເຂົາໄດ້ນຳເອົາຫີບຄຳສັນຍາມາວາງໄວ້
ໃນຕູບຜ້າເຕັນບ່ອນທີ່ດາວິດປຸກຕູບໄວ້ ແລ້ວດາວິດກໍຖວາຍເຄື່ອງເຜົາບູຊາ ແລະເຄື່ອງບູຊາ
ເພື່ອຄວາມສາມັກຄີແກ່ພຣະຜູ້ເປັນເຈົ້າ. 18ເມື່ອການຖວາຍເຄື່ອງບູຊາຜ່ານໄປແລ້ວ ພະອົງກໍ
ອວຍພອນແກ່ປະຊາຊົນ ໃນພຣະນາມຂອງພຣະຜູ້ເປັນເຈົ້າແຫ່ງຈັກກະວານ.” 19ແລ້ວພະອົງກໍ
ເອົາເຂົ້າຈີ່ ຊີ້ນປີ້ງ ແລະໝາກອະງຸ່ນຢາຍໃຫ້ພວກຜູ້ຊາຍ ແລະພວກຜູ້ຍິງຊາວອິສຣາເອນກິນ
ໝົດທຸກໆ ຄົນ ແລ້ວຈຶ່ງໄດ້ກັບເມືອເຮືອນ. 20ສ່ວນດາວິດກໍກັບເມືອເຮືອນ ເພື່ອອວຍໄຊໃຫ້
ພອນແກ່ຄອບຄົວຂອງຕົນ ມີການ ລູກສາວຊາອູນກໍອອກມາພົບພະອົງ ນາງເວົ້າຂຶ້ນວ່າ, “ມື້ນີ້
ກະສັດອິສຣາເອນໄດ້ສ້າງຊື່ສຽງອັນຍິ່ງໃຫຍ່ສຳລັບຕົນເອງ ພະອົງໄດ້ເຮັດດັ່ງຄົນບ້າຕໍ່ສາຍຕາ
ພວກສາວໃຊ້ຂອງບັນດາຂ້າລາຊະການຂອງຕົນ.”
21ດາວິດກໍຕອບວ່າ, “ຂ້ອຍຟ້ອນຖວາຍແດ່ພຣະຜູ້ເປັນເຈົ້າ ຜູ້ຊົງເລືອກເອົາຂ້ອຍໃຫ້ເປັນຜູ້
ເໜືອກວ່າພໍ່ຂອງເຈົ້າ ແລະຄອບຄົວຂອງເພິ່ນເພື່ອແຕ່ງຕັ້ງໃຫ້ຂ້ອຍເປັນຜູ້ນຳອິສຣາເອນໄພ່ພົນ
ຂອງພຣະອົງ ແລະຂ້ອຍຈະຟ້ອນຖວາຍກຽດແກ່ພຣະຜູ້ເປັນເຈົ້າ. 22ແລ້ວຈະພະຍາຍາມຖ່ອມ-
ຕົວລົງຫລາຍກວ່ານີ້ອີກ ເຈົ້າອາດຄິດວ່າຂ້ອຍບໍ່ມີຄວາມໝາຍຫຍັງໝົດ ແຕ່ສາວໃຊ້ເຫລົ່ານັ້ນ
ອາດຈະຄິດໃຫ້ກຽດແກ່ຂ້ອຍກໍໄດ້.” 23ນາງມີການ ລູກສາວຂອງຊາອູນ ບໍ່ເຄີຍມີລູກຈັກເທື່ອ.

# ບົດທີ 7

## ນາທານນຳຂ່າວມາໃຫ້ດາວິດ

1ເມື່ອກະສັດດາວິດປະທັບຢູ່ໃນພະລາຊະວັງຂອງພະອົງ ພຣະຜູ້ເປັນເຈົ້າກໍຊົງອວຍພອນໃຫ້
ດາວິດໄດ້ຮັບຄວາມປອດໄພ ຈາກສັດຕູທັງຫລາຍ. 2ແລ້ວກະສັດດາວິດເວົ້າຕໍ່ນາທານຜູ້ປະ-
ກາດພຣະທຳວ່າ, “ເບິ່ງແມ ຂ້າພະເຈົ້າກຳລັງຢູ່ໃນເຮືອນທີ່ສ້າງດ້ວຍໄມ້ສົນ ແຕ່ວ່າຫີບຄຳສັນ-
ຍາຂອງພຣະເຈົ້າໄດ້ເອົາໄວ້ໃນຕູບຜ້າເຕັນ.” 3ນາທານຈຶ່ງຕອບວ່າ, “ຂໍພະອົງຈົ່ງເຮັດຕາມສິ່ງ
ທີ່ພະອົງພໍພະໄທເທີ້ນ ເພາະວ່າພຣະຜູ້ເປັນເຈົ້າຊົງສະຖິດຢູ່ນຳພະອົງ.” 4ແຕ່ໃນຄືນນັ້ນ ພຣະ-
ຜູ້ເປັນເຈົ້າຊົງກ່າວຕໍ່ນາທານວ່າ, 5“ຈົ່ງໄປບອກດາວິດຜູ້ຮັບໃຊ້ຂອງເຮົາວ່າ ເຮົາເວົ້າກັບລາວ
ດັ່ງນີ້, ເຈົ້າບໍ່ແມ່ນຜູ້ທີ່ຈະສ້າງວິຫານໃຫ້ເຮົາຢູ່ 6ນັບຕັ້ງແຕ່ເຮົາໄດ້ນຳເອົາຊາວອິສຣາເອນອອກ
ມາຈາກເອຢິບ ຈົນເທົ່າທຸກມື້ນີ້ ເຮົາບໍ່ໄດ້ຢູ່ໃນວິຫານເລີຍ 7ເຮົາໄດ້ຍົກຍ້າຍໄປມານຳພວກເຈົ້າ
ຕະຫລອດທີ່ເຮົາເດີນທາງໄປມານຳປະຊາຊົນອິສຣາເອນ ໄພ່ພົນຂອງເຮົາ ເຮົາບໍ່ໄດ້ຖາມພວກ
ຜູ້ປົກຄອງ ຜູ້ທີ່ເຮົາໄດ້ແຕ່ງຕັ້ງໃຫ້ເປັນຜູ້ດູແລໄພ່ພົນຂອງເຮົາເລີຍວ່າ ເປັນຫຍັງພວກເຈົ້າຈຶ່ງບໍ່
ສ້າງວິຫານດ້ວຍໄມ້ສົນໃຫ້ເຮົາຢູ່.
8ດັ່ງນັ້ນ ຈົ່ງບອກແກ່ດາວິດຜູ້ຮັບໃຊ້ຂອງເຮົາວ່າ ພຣະຜູ້ເປັນເຈົ້າແຫ່ງຈັກກະວານໄດ້ກ່າວ
ດັ່ງນີ້ ເຈົ້າເປັນຄົນລ້ຽງແກະຢູ່ຕາມທົ່ງນາ ເຮົາໄດ້ເລືອກເອົາເຈົ້າມາເປັນຜູ້ປົກຄອງຊາວອິ-

ສຣາເອນ ໄພ່ພົນຂອງເຮົາ. 9ເຮົາໄດ້ຢູ່ກັບເຈົ້າໃນທຸກທີ່ທຸກບ່ອນທີ່ເຈົ້າໄປ ແລະໄດ້ເຮັດໃຫ້ສັດ-
ຕູທັງຫລາຍຂອງເຈົ້າພ່າຍແພ້ ເຮົາໄດ້ສ້າງໃຫ້ເຈົ້າຍິ່ງໃຫຍ່ເທົ່າກັບຜູ້ນຳທີ່ຍິ່ງໃຫຍ່ໃນໂລກນີ້.
10-11ເຮົາຈະເລືອກບ່ອນສຳລັບຊາວອິສຣາເອນໄພ່ພົນຂອງເຮົາ ແລະຈະໃຫ້ພວກເຂົາຢູ່ໃນບ່ອນ
ນັ້ນ ໂດຍປາດສະຈາກການຣົບກວນທຸກຢ່າງ ນັບຕັ້ງແຕ່ພວກເຂົາເຂົ້າມາຢູ່ໃນແຜ່ນດິນນີ້ ພວກ
ເຂົາຖືກພວກທະຫານຜູ້ເກັ່ງກ້າມາສູ້ຮົບ ແຕ່ວ່າດຽວນີ້ ຈະບໍ່ມີເຫດການຢ່າງໃດເກີດຂຶ້ນອີກ ເຮົາ
ຂໍສັນຍາວ່າ ເຮົາຈະຮັກສາເຈົ້າໃຫ້ພົ້ນຈາກສັດຕູທັງຫລາຍຂອງເຈົ້າ ແລະຈະໃຫ້ເຈົ້າມີເຊື້ອສາຍ
ສືບຕໍ່ກັນໄປ. 12ເມື່ອເຈົ້າຕາຍໄປ ແລະຖືກຝັງໄວ້ກັບພວກບັນພະບູລຸດຂອງເຈົ້າ ເຮົາຈະແຕ່ງຕັ້ງ
ຜູ້ໜຶ່ງໃນເຊື້ອສາຍຂອງເຈົ້າໃຫ້ເປັນກະສັດ ແລະຈະເຮັດໃຫ້ລາຊະອານາຈັກຂອງຜູ້ນັ້ນເຂັ້ມແຂງ
ຂຶ້ນ. 13ເຮົາຂໍບອກຢ່າງແນ່ນອນວ່າ ເຊື້ອສາຍຂອງລາວຈະປົກຄອງຕະຫລອດໄປ ແລະລາວກໍ
ຈະສ້າງວິຫານໃຫ້ແກ່ເຮົາ. 14ເຮົາຈະເປັນພໍ່ຂອງລາວ ແລະລາວຈະເປັນລູກຂອງເຮົາ ເມື່ອອິ-
ສຣາເອນເຮັດຜິດ ເຮົາຈະລົງໂທດເໝືອນດັ່ງພໍ່ລົງໂທດລູກ. 15ແຕ່ວ່າ ເຮົາຈະເຊົາຮັກລາວ
ເໝືອນດັ່ງເຊົາຮັກຊາອູນ ຜູ້ທີ່ເຮົາໄດ້ປົດຕຳແໜ່ງນັ້ນ ເພື່ອວ່າເຈົ້າຈະເປັນກະສັດ 16ເຈົ້າຈະມີ
ເຊື້ອສາຍຢູ່ຕະຫລອດໄປ ແລະເຮົາຈະໃຫ້ລາຊະອານາຈັກຂອງເຈົ້າຄົງຢູ່ຊົ່ວນິລັນດອນ ຕຳ-
ແໜ່ງຂອງເຈົ້າຈະບໍ່ມີທີ່ສິ້ນສຸດ.” 17ນາທານໄດ້ບອກດາວິດທຸກສິ່ງ ຕາມທີ່ພຣະເຈົ້າຊົງບອກ.

## ດາວິດອ້ອນວອນຂອບພຣະຄຸນ

18ຕໍ່ມາ ກະສັດດາວິດ ໄດ້ເຂົ້າໄປອ້ອນວອນຢູ່ໃນຫໍເຕັນສັກສິດວ່າ, “ຂ້າແດ່ພຣະຜູ້ເປັນເຈົ້າ
ຂ້ານ້ອຍ ແລະຄອບຄົວບໍ່ມີຄຸນຄ່າຢ່າງໃດຕໍ່ທຸກສິ່ງທີ່ພຣະອົງໄດ້ຊົງປະຕິບັດຕໍ່ຂ້ານ້ອຍນັ້ນ.
19ເຖິງປານນັ້ນ ພຣະອົງກໍຍັງຊົງກະທຳຕໍ່ຂ້ານ້ອຍຕື່ມອີກ ຄື ຊົງສັນຍາວ່າຈະໃຫ້ເຊື້ອສາຍຂອງ
ຂ້ານ້ອຍໄດ້ສືບບັນລັງຢູ່ຕໍ່ໆ ໄປ ໂອ! ພຣະຜູ້ເປັນເຈົ້າ ພຣະອົງຊົງອະນຸຍາດໃຫ້ຂ້ານ້ອຍຜູ້
ເປັນມະນຸດຮູ້ຈັກເລື່ອງນີ້ໄດ້. 20ຂ້ານ້ອຍຈະເວົ້າຢ່າງໃດຕໍ່ພຣະອົງອີກ ເພາະພຣະອົງຊົງຮູ້ຈັກ
ຂ້ານ້ອຍຜູ້ຮັບໃຊ້ຂອງພຣະອົງແລ້ວ. 21ມັນເປັນນ້ຳພຣະໄທ ແລະພຣະລາຊະປະສົງຂອງພຣະ-
ອົງທີ່ເຮັດການນີ້ ພຣະອົງຊົງໃຫ້ຂ້ານ້ອຍຮູ້ຈັກສິ່ງຍິ່ງໃຫຍ່ເຫລົ່ານີ້ທັງໝົດ. 22ຂ້າແດ່ພຣະຜູ້-
ເປັນເຈົ້າ ພຣະອົງຊົງຍິ່ງໃຫຍ່ທີ່ສຸດ ຕາມທີ່ພວກຂ້ານ້ອຍເອງໄດ້ຍິນ ບໍ່ມີຜູ້ໃດເໝືອນດັ່ງພຣະ-
ອົງ ແລະບໍ່ມີພຣະເຈົ້າອົງອື່ນນອກຈາກພຣະອົງ. 23ໃນໂລກນີ້ ບໍ່ມີຊົນຊາດອື່ນໃດເໝືອນດັ່ງອິ-
ສຣາເອນໄພ່ພົນຂອງພຣະອົງ ຊຶ່ງເປັນພວກທີ່ພຣະອົງຊົງຊ່ອຍຊີວິດໄວ້ ແລະຊົງໃຫ້ເປັນພວກ
ຂອງພຣະອົງ ພຣະອົງຊົງເຮັດໃຫ້ຄົນທັງຫລາຍເຫັນຄວາມຍິ່ງໃຫຍ່ຂອງພຣະອົງ ແລະຊົງກະ-
ທຳການອັນຍິ່ງໃຫຍ່ ແລະອັດສະຈັນໃຫ້ແກ່ພວກເຂົາ ພຣະອົງຊົງຂັບໄລ່ຊົນຊາດຕ່າງໆ ແລະ
ພະຂອງພວກເຂົາອອກໄປຕໍ່ໜ້າໄພ່ພົນຂອງພຣະອົງ ຊຶ່ງເປັນພວກທີ່ພຣະອົງຊົງໄຖ່ເຂົາອອກ
ຈາກປະເທດເອຢິບ ແລະຊົງໃຫ້ເປັນພວກຂອງພຣະອົງ. 24ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງຊົງ
ເຮັດໃຫ້ໄພ່ພົນອິສຣາເອນເປັນພວກຂອງພຣະອົງຕະຫລອດໄປ ແລະພຣະອົງກໍຊົງເປັນພຣະ-
ເຈົ້າຂອງພວກເຂົາ. 25ຂ້າແດ່ພຣະຜູ້ເປັນເຈົ້າ ດຽວນີ້ ຂໍພຣະອົງຊົງປະຕິບັດຕາມຄຳສັນຍາທີ່
ພຣະອົງມີໄວ້ກັບຂ້ານ້ອຍ ພ້ອມດ້ວຍຄອບຄົວຂອງຂ້ານ້ອຍຕະຫລອດໄປ ແລະຂໍຊົງກະທຳຕາມ
ທີ່ພຣະອົງຊົງກ່າວໄວ້. 26ພຣະນາມຂອງພຣະອົງຈະຊົງຍິ່ງໃຫຍ່ຕະຫລອດໄປ ແລະປະຊາຊົນກໍ

ຈະເວົ້າວ່າ “ພຣະຜູ້ເປັນເຈົ້າ ແຫ່ງຈັກກະວານຊົງເປັນ ພຣະເຈົ້າປົກຄອງພວກອິສຣາເອນ ແລະ
ພຣະອົງຈະໃຫ້ຄຳໝັ້ນໃຈວ່າ ເຊື້ອສາຍຂອງຂ້ານ້ອຍຈະເປັນເຈົ້າຊີວິດຕະຫລອດໄປ. 27ຂ້າແດ່
ພຣະຜູ້ເປັນເຈົ້າ ແຫ່ງຈັກກະວານ ພຣະເຈົ້າຂອງພວກອິສຣາເອນ ດ້ວຍວ່າ ພຣະອົງຊົງໃຫ້ຂ້າ-
ນ້ອຍຜູ້ຮັບໃຊ້ຂອງພຣະອົງຮູ້ຈັກການນີ້ ໂດຍໄດ້ບອກໃຫ້ຂ້ານ້ອຍຮູ້ຈັກກ່ອນວ່າ ພຣະອົງຈະຊົງ
ໃຫ້ເຊື້ອສາຍຂອງຂ້ານ້ອຍເປັນເຈົ້າຊີວິດ ຂ້ານ້ອຍຈຶ່ງກ້າອ້ອນວອນຕໍ່ພຣະອົງ. 28ຂ້າແດ່ພຣະຜູ້-
ເປັນເຈົ້າ ພຣະອົງເປັນພຣະເຈົ້າ ຄຳເວົ້າຂອງພຣະອົງຊົງເປັນຈິງ ແລະພຣະອົງຊົງໃຫ້ຄຳສັນ-
ຍາຢ່າງອັດສະຈັນນີ້ແກ່ຂ້ານ້ອຍ. 29ດຽວນີ້ ຂໍພຣະອົງຊົງອວຍພອນໃຫ້ເຊື້ອສາຍຂອງຂ້ານ້ອຍ
ເທີ້ນ ເພື່ອວ່າພວກເຂົາຈະໄດ້ດຳລົງໝັ້ນຄົງຢູ່ຕໍ່ພຣະພັກຂອງພຣະອົງຢູ່ບໍ່ຂາດ ພຣະອົງຜູ້ຊົງ
ເປັນພຣະຜູ້ເປັນເຈົ້າໄດ້ຊົງສັນຍາໄວ້ຢ່າງນີ້ ຂໍໃຫ້ພຣະພອນຂອງພຣະອົງເຫລືອຢູ່ໃນເຊື້ອສາຍ
ຂອງຂ້ານ້ອຍຕະຫລອດໄປເທີ້ນ.”

# ບົດທີ 8

## ດາວິດປົກຄອງອິສຣາເອນທັງໝົດ

1ຢູ່ມາພາຍຫລັງ ດາວິດໂຈມຕີພວກຟີລິດສະຕິນ ແລະປາບປາມພວກເຂົາໄດ້ ແລະດາວິດ
ຍຶດເມືອງເມເທັກ-ອຳມາໄດ້ ຈາກມືພວກຟີລິດສະຕິນ 2ພະອົງຊະນະໂມອາບ ຊົງວັດແທກ
ພວກເຂົາດ້ວຍເຊືອກວັດ ຄືບັງຄັບໃຫ້ລຽງຕົວເຂົ້າແຖວນອນລົງພື້ນດິນວັດແທກເບິ່ງແລ້ວໃຫ້
ປະຫານຊີວິດສອງແຖວ ແລະໄວ້ຊີວິດໜຶ່ງແຖວເຕັມ ຄົນໂມອາບກາຍເປັນຂ້າໃຊ້ຂອງດາວິດ
ແລະໄດ້ນຳເຄື່ອງບັນນາການມາຖວາຍໃຫ້ເພິ່ນ 3ດາວິດຮົບຊະນະຮາດັດເອເຊີລູກຊາຍເຣໂຮບ
ກະສັດເມືອງໂຊບາ ໃນເວລາທີ່ເພິ່ນສະເດັດໄປຕັ້ງອຳນາດຂອງພະອົງໄວ້ອີກ ຢູ່ແມ່ນ້ຳເອ-
ຟຣາດ 4ແລະດາວິດຍຶດລົດຮົບໜຶ່ງພັນຄັນ ທະຫານມ້າເຈັດຮ້ອຍຄົນ ທະຫານລາບສອງໝື່ນຄົນ
ແລະດາວິດຮັບສັ່ງໃຫ້ຕັດເອັນຂາບ່ອງມ້າລົດຮົບທັງໝົດ ເຫລືອໄວ້ໃຫ້ພໍແຕ່ລົດຮົບໜຶ່ງຮ້ອຍຄັນ
5ເມື່ອຄົນຊີເຣຍຊາວເມືອງດາມາເຊມາຊ່ວຍຮາດັດເອເຊີກະສັດເມືອງໂຊບາ ດາວິດປະຫານ
ຊີວິດຄົນຊີເຣຍສອງໝື່ນ ສອງພັນຄົນ 6ແລ້ວດາວິດຕັ້ງກອງທັບທະຫານໄວ້ປະຈຳປ້ອມເທິງ
ຄົນຊີເຣຍຊາວເມືອງດາມາເຊຫລາຍກອງ ແລະຄົນຊີເຣຍກໍເປັນໄພ່ພົນຂອງດາວິດ ແລະ ນຳ
ເຄື່ອງບັນນາການໄປຖວາຍ ພຣະຜູ້ເປັນເຈົ້າຊົງປະທານໄຊຊະນະແກ່ດາວິດບໍ່ວ່າຈະໄປຮົບຢູ່
ບ່ອນໃດກໍຕາມ. 7ແລະດາວິດນຳເອົາໂລ່ທອງຄຳທີ່ຂ້າລາຊະການທະຫານຂອງຮາດັດເອເຊີຖື
ນັ້ນໄປເມືອງເຢຣູຊາເລັມ 8ກະສັດດາວິດຍຶດທອງສຳລິດເປັນຈຳນວນຫລາຍຈາກເມືອງເບຕາ
ແລະເມືອງເບໂຣທາຍຫົວເມືອງຂອງຮາດັດເອເຊີ.

9ເມື່ອໂຕຍກະສັດເມືອງຮາມັດໄດ້ຍິນວ່າດາວິດຮົບຊະນະກອງທັບທັງໝົດຂອງຮາດັດເອເຊີ
10ໂຕຍກໍສົ່ງໂຢຣາມລູກຊາຍຂອງຕົນໄປເຝົ້າກະສັດດາວິດ ເພື່ອຄຳນັບ ແລະສະແດງຄວາມ
ຍິນດີທີ່ດາວິດຮົບຊະນະ ຮາດັດເອເຊີ ເພາະວ່າຮາດັດເອເຊີເຄີຍເຮັດສົງຄາມກັບໂຕຍຢູ່ບໍ່ຂາດ
ແລະໂຢຣາມໄດ້ນຳເຄື່ອງເງິນເຄື່ອງທອງຄຳ ແລະເຄື່ອງທອງສຳລິດໄປຖວາຍ 11ສິ່ງເຫລົ່ານີ້
ກະສັດດາວິດຊົງນຳມອບຖວາຍແກ່ພຣະຜູ້ເປັນເຈົ້າພ້ອມກັບບັນດາເງິນ ແລະທອງຄຳຊຶ່ງພະ

ອົງຊົງໄດ້ມາຈາກບັນດາປະຊາຊາດທີ່ພະອົງຮົບຊະນະແລະຍຶດຄອງ. 12ຄືໄດ້ມາຈາກປະເທດຊີ-
ເຣຍ ໂມອາບ ລູກຫຼານອຳໂມນ ພວກຟີລິດສະຕິນ ອາມາເລັກ ແລະຈາກຂອງທີ່ຍຶດມາຈາກ
ຮາດັດເອເຊີລູກຊາຍຂອງເຣໂຮບກະສັດເມືອງໂຊບາ.

13ເມື່ອກະສັດ ດາວິດ ກັບຈາກການໂຈມຕີຄົນຊີເຣຍໜຶ່ງໝື່ນແປດພັນຄົນໃນຮ່ອມພູເກືອ ຊື່
ສຽງຂອງພະອົງ ກໍຊ່າລືໄປ 14ແລະເພິ່ນໄດ້ຕັ້ງທະຫານປະຈຳປ້ອມໄວ້ທົ່ວເມືອງເອໂດມທັງໝົດ
ແລະຄົນເອໂດມທັງໝົດຈຶ່ງເປັນໄພ່ພົນຂອງດາວິດ ແລະ ພຣະຜູ້ເປັນເຈົ້າໄດ້ຄຸ້ມຄອງດາວິດ
ໃນທຸກທີ່ທຸກບ່ອນທີ່ດາວິດໄປ 15ດັ່ງນັ້ນ ດາວິດຈຶ່ງປົກຄອງອິສຣາເອນທັງໝົດ ແລະໄດ້ຕັດ-
ສິນຕາມກົດໝາຍດ້ວຍຄວາມຍຸດຕິທຳ ແລະຄວາມ ທ່ຽງທຳແກ່ຊົນຊາດຂອງພະອົງທັງໝົດ.

16ແລະໂຢອາບລູກຊາຍນາງເຊຣູຢາເປັນຜູ້ບັນຊາການກອງທັບ ແລະເຢໂຮຊາຟັດລູກຊາຍ
ອາຮີລຸດເປັນເລຂາ. 17ຊາໂດກລູກຊາຍອາຮີຕຸບ ແລະອາຮີເມເລັກລູກຊາຍອາບີອາທາເປັນ
ປະໂລຫິດ ແລະເສຣາຢາເປັນເລຂາ 18ແລະເບນາຢາລູກຊາຍເຢໂຮຢາດາເປັນຜູ້ບັງຄັບບັນຊາ
ຄົນເກເຣັດ ແລະຄົນເປເລດ ແລະບັນດາລູກຊາຍຂອງ ດາວິດເປັນປະມຸກ.

# ບົດທີ 9

## ດາວິດແລະເມຟີເບເຊັດ

1ດາວິດຖາມຂຶ້ນວ່າ, "ໃນຄອບຄົວຂອງຊາອູນຍັງມີຄົນເຫລືອຢູ່ອີກບໍ? ຖ້າວ່າມີຂ້າພະເຈົ້າ
ຢາກຊ່ອຍເຫລືອເກື້ອກູນລາວ ເພາະເຫັນແກ່ໂຢນາທານ."

2ແລ້ວຊີບາ ຄົນໃຊ້ໃນຄອບຄົວຂອງຊາອູນ ກໍໄດ້ຮັບຄຳສັ່ງໃຫ້ມາເຝົ້າກະສັດ ເຈົ້າຊີວິດຈຶ່ງ
ຖາມວ່າ, "ເຈົ້າແມ່ນຊີບາບໍ?" ລາວທູນຕອບວ່າ, "ໂດຍ ຂ້ານ້ອຍ." 3ເຈົ້າຊີວິດຖາມລາວອີກ
ວ່າ, "ຍັງມີບາງຄົນເຫລືອຢູ່ໃນຄອບຄົວຊາອູນບໍ? ເພາະວ່າຂ້ອຍຢາກສະແດງຄວາມເມດຕາ
ແລະຊ່ອຍເຫລືອເກື້ອກູນລາວຕາມນ້ຳພຣະໄທຂອງພຣະເຈົ້າ." ຊີບາທູນຕອບວ່າ, "ຍັງມີລູກ
ຊາຍຂອງໂຢນາທານຄົນໜຶ່ງ ແຕ່ລາວເປັນຄົນເສຍອົງຄະ." 4ຝ່າຍເຈົ້າຊີວິດກໍຖາມວ່າ, "ດຽວນີ້
ລາວຢູ່ໃສ" ຊີບາຈຶ່ງທູນຕອບວ່າ, "ລາວຢູ່ໃນເຮືອນຂອງມາກີ ລູກຊາຍຂອງອຳມີເອນຢູ່ທີ່ບ້ານ
ໂລເດບາ.

5ແລ້ວເຈົ້າຊີວິດກໍສັ່ງຄົນໄປນຳເອົາລາວມາ." 6ເມື່ອເມຟີເບເຊັດ ລູກຊາຍຂອງໂຢນາທານຜູ້
ເປັນຫລານຂອງຊາອູນມາຮອດ ລາວກໍກົ້ມຂາບລົງສະແດງຄວາມເຄົາລົບຕໍ່ດາວິດ ດາວິດໄດ້
ກ່າວວ່າ, "ເມຟີໂບເຊັດ" ເມຟີໂບເຊັດຈຶ່ງທູນຕອບວ່າ, "ໂດຍຂ້ານ້ອຍ."

7ດາວິດເວົ້າຕໍ່ໄປວ່າ, "ບໍ່ຕ້ອງຢ້ານ ເພາະເຫັນແກ່ໂຢນາທານ ພໍ່ຂອງເຈົ້າ ຂ້ອຍຈະເມດຕາ
ເຈົ້າ ຂ້ອຍຈະເອົາສິ່ງທີ່ດີທັງໝົດທີ່ເປັນຂອງຊາອູນພໍ່ປູ່ຂອງເຈົ້າມາມອບຄືນໃຫ້ແກ່ເຈົ້າ ແລະ
ຂ້ອຍຍິນດີໃຫ້ເຈົ້າມາຮ່ວມຮັບປະທານອາຫານກັບຂ້ອຍເລື້ອຍໆ." 8ເມຟີໂບເຊັດກໍກົ້ມຂາບລົງ
ອີກເທື່ອໜຶ່ງ ແລະທູນວ່າ, "ຂ້າແດ່ພະອົງ ຂ້ານ້ອຍບໍ່ມີຄຸນຄ່າຊໍ່າຊາກໝາຕາຍຊໍ້າ ເປັນຫຍັງ
ພະອົງຈຶ່ງດີກັບຂ້ານ້ອຍຢ່າງນີ້."

9ແລ້ວເຈົ້າຊີວິດ ກໍເອີ້ນຊີບາຄົນໃຊ້ຂອງຊາອູນມາ ແລະເວົ້າວ່າ, "ຂ້ອຍໄດ້ມອບທຸກໆ ສິ່ງ

ທີ່ເປັນຂອງ ຊາອູນ ແລະຂອງຄອບຄົວເພິ່ນຄືນໃຫ້ແກ່ ເມຟີໂບເຊັດ ຫລານຊາຍນາຍຂອງເຈົ້າ
ແລ້ວ. [10]ສ່ວນເຈົ້າ ລູກຊາຍເຈົ້າພ້ອມທັງຄົນໃຊ້ຂອງເຈົ້າ ຈົ່ງເຮັດໄຮ່ໄຖນາໃສ່ພືນແຜ່ນດິນນີ້
ໃຫ້ຄອບຄົວຂອງຊາອູນມີອາຫານກິນ ສ່ວນ ເມຟີໂບເຊັດນັ້ນ ຈະຕ້ອງເປັນແຂກປະຈໍາໂຕະອາ-
ຫານຂອງຂ້ອຍສະເໝີ” ຊີບາມີລູກຊາຍສິບຫ້າຄົນ ແລະຄົນໃຊ້ຊາວຄົນ.
[11]ຊີບາທູນຕອບວ່າ, “ຂ້ານ້ອຍຈະເຮັດທຸກສິ່ງຕາມພຣະອົງຊົງສັ່ງ.” ດັ່ງນັ້ນ ເມຟີໂບເຊັດ ຈຶ່ງ
ໄດ້ກິນເຂົ້າຮ່ວມໂຕະກັບເຈົ້າຊີວິດເໝືອນດັ່ງເປັນລາຊະໂອລົດອົງໜຶ່ງຂອງພະອົງ.
[12]ເມຟີໂບເຊັດ ມີລູກຊາຍຊື່ວ່າ ມີກາ ທຸກຄົນໃນຄອບຄົວຊີບາກໍມາເປັນຄົນໃຊ້ຂອງ ເມຟີ-
ໂບເຊັດທັງໝົດ. [13]ເມຟີໂບເຊັດຜູ້ທີ່ມີຕີນລ່ອຍທັງສອງເບື້ອງກໍຢູ່ໃນນະຄອນ ເຢຣູຊາເລັມ ແລະ
ກິນເຂົ້າຮ່ວມໂຕະກັບເຈົ້າຊີວິດທຸກໆ ຄາບ.

# ບົດທີ 10

## ສົງຄາມກັບຄົນອໍາໂມນ ແລະຄົນຊີເຣຍ[ກ]

[1]ຢູ່ມາພາຍຫລັງກະສັດແຫ່ງຄົນ ອໍາໂມນ ຕາຍ ແລະ ຮານູນ ລູກຊາຍໄດ້ສະເວີຍລາຊະສົມບັດ
ແທນ [2]ດາວິດ ຈຶ່ງກ່າວວ່າ “ເຮົາຈະສະແດງຄວາມເມດຕາຕໍ່ ຮານູນ ລູກຊາຍຂອງ ນາຮາດ
ເໝືອນດັ່ງທີ່ພໍ່ຂອງລາວໄດ້ສະແດງຄວາມເມດຕາຕໍ່ເຮົາ” ດາວິດ ຈຶ່ງສົ່ງພວກຂ້າລາຊະການຂອງ
ພະອົງໄປເລົ້າໂລມໃຈເພິ່ນກ່ຽວກັບເລື່ອງພໍ່ຂອງເພິ່ນ ແລະ ຂ້າລາຊະການຂອງ ດາວິດກໍເຂົ້າມາ
ໃນແຜ່ນດິນຂອງລູກຫລານ ອໍາໂມນ [3]ແຕ່ບັນດາເຈົ້ານາຍຂອງລູກຫລານ ອໍາໂມນກາບທູນ ຮາ-
ນູນ ເຈົ້ານາຍຂອງພວກເຂົາວ່າ “ພະອົງຄິດວ່າ ດາວິດ ສົ່ງຜູ້ເລົ້າໂລມມາຫາພະອົງ ເພາະນັບຖືບິ-
ດາຂອງພະອົງຈັ່ງຊັ້ນບໍ? ດາວິດບໍ່ໄດ້ສົ່ງຂ້າລາຊະການມາຫາພະອົງເພື່ອຈອບ ແລະສອດແນມ
ເບິ່ງ ແລະເພື່ອຈະທໍາລາຍເມືອງນີ້ບໍ່ແມ່ນບໍ?”
[4]ຮານູນ ຈຶ່ງຈັບຂ້າລາຊະການຂອງ ດາວິດ ມາແຖເຄົາເຄິ່ງໜຶ່ງຂອງພວກເຂົາ ແລະຕັດເຄິ່ງ
ກາງເຄື່ອງນຸ່ງລົງຮອດຕະໂພກ ແລ້ວປ່ອຍພວກເຂົາໄປ [5]ເມື່ອມີຄົນໄປກາບທູນ ດາວິດ ໃຫ້ຊົງຮູ້
ພະອົງກໍຮັບສັ່ງໃຫ້ຄົນໄປຮັບຂ້າລາຊະການ ເຫລົ່ານັ້ນ ເພາະວ່າພວກເຂົາໄດ້ຮັບຄວາມອັບອາຍ
ຫລາຍ ແລະກະສັດກ່າວວ່າ “ຈົ່ງພັກຢູ່ທີ່ເມືອງ ເຢຣິໂກ ຈົນກວ່າເຄົາຂອງ ທ່ານທັງຫລາຍຈະຂຶ້ນ
ແລ້ວຈຶ່ງຄ່ອຍກັບມາ.”
[6]ເມື່ອຄົນ ອໍາໂມນ ເຫັນວ່າພວກເຂົາເປັນທີ່ກຽດຊັງແກ່ ດາວິດ ຄົນ ອໍາໂມນ ຈຶ່ງສົ່ງຄົນໄປຈ້າງ
ຄົນຊີເຣຍຊາວເມືອງ ເບັດ-ເຣໂຮບ ແລະຄົນຊີເຣຍຊາວເມືອງ ໂຊບາ ເປັນທະຫານລາບຈໍາ-
ນວນສອງໝື່ນຄົນ ຈາກກະສັດເມືອງ ມາອາກາ ໜຶ່ງພັນຄົນ ແລະຊາວເມືອງ ໂຕບ ໜຶ່ງໝື່ນສອງ
ພັນຄົນ.
[7]ເມື່ອ ດາວິດ ຊົງໄດ້ຍິນເຊັ່ນນັ້ນຈຶ່ງຮັບສັ່ງ ໂຢອາບ ແລະພົນໂຍທາຄົນເກັ່ງກ້າທັງໝົດໃຫ້ໄປ
[8]ຝ່າຍຄົນ ອໍາໂມນກໍຍົກທັບອອກມາ ແລະຈັດຖານທັບໄວ້ຢູ່ທາງເຂົ້າປະຕູເມືອງ ຝ່າຍຄົນຊີເຣຍ
ຊາວເມືອງ ໂຊບາ ແລະ ຊາວເມືອງ ເຣໂຮບ ກັບຄົນເມືອງ ໂຕບ ແລະເມືອງ ມາອາກາ ຢູ່ຊົນນະ-

[ກ]1ຂຄວ 19:1–19

ບົດກາງແຈ້ງຕ່າງຫາກ.
9ເມື່ອ ໂຢອາບ ເຫັນວ່າການເສິກນີ້ມີຢູ່ທັງຂ້າງໜ້າ ແລະຂ້າງຫລັງ ເພິ່ນຈຶ່ງຄັດເອົາບັນດາຄົນ
ອິສຣາເອນ ທີ່ຄັດເລືອກໄວ້ແລ້ວຈັດທັບເຂົ້າສູ້ຄົນຊີເຣຍ 10ເພິ່ນມອບຄົນທີ່ເຫລືອຢູ່ໄວ້ໃນບັງຄັບ
ບັນຊາຂອງ ອາບີຊາຍ ນ້ອງຊາຍຂອງທ່ານ ແລະລາວກໍຈັດຄົນເຫລົ່ານັ້ນ ເຂົ້າຕໍ່ສູ້ກັບຄົນ ອຳ-
ໂມນ 11ເພິ່ນກ່າວວ່າ “ຖ້າກຳລັງຄົນຊີເຣຍ ເໜືອກຳລັງຂອງເຮົາ ເຈົ້າຈົ່ງຍົກທັບໄປຊ່ວຍເຮົາ
ແຕ່ຖ້າກຳລັງຄົນ ອຳໂມນ ເໜືອກຳລັງຂອງເຈົ້າ ເຮົາຈະຍົກທັບມາຊ່ວຍເຈົ້າ 12ຈົ່ງມີຄວາມກ້າ-
ຫານເທີ້ນ ໃຫ້ເຮົາເປັນລູກຜູ້ຊາຍທີ່ກ້າຫານ ເພື່ອຊົນຊາດຂອງເຮົາ ແລະເພື່ອຫົວເມືອງແຫ່ງ
ພຣະເຈົ້າຂອງພວກເຮົາ ແລະຂໍພຣະຜູ້ເປັນເຈົ້າຊົງເຮັດຕາມທີ່ພຣະອົງຊົງເຫັນຊອບເທີ້ນ.”
13ດັ່ງນັ້ນ ໂຢອາບ ກັບປະຊາຊົນທີ່ຢູ່ກັບ ເພິ່ນກໍຍົກທັບ ເຂົ້າມາໃກ້ເພື່ອຕໍ່ສູ້ກັບພວກຊີເຣຍ,
ພວກທະຫານກໍແຕກ ປົບໜີໄປຕໍ່ໜ້າພວກເຂົາ 14ເມື່ອຄົນອຳໂມນ ເຫັນວ່າຄົນຊີເຣຍໜີໄປແລ້ວ
ພວກເຂົາກໍປົບໜີຈາກ ອາບີຊາຍ ເຂົ້າໄປໃນເມືອງ ແລ້ວ ໂຢອາບ ກໍກັບມາຈາກການສູ້ຮົບກັບຄົນ
ອຳໂມນ ມາຍັງເມືອງ ເຢຣູຊາເລັມ.
15ເມື່ອຄົນ ຊີເຣຍ ເຫັນວ່າຝ່າຍຕົນພ່າຍ ແພ້ຕໍ່ ອິສຣາເອນ ແລ້ວ ຈຶ່ງລວບລວມກຳລັງ ເຂົ້າກັນ
16ຝ່າຍ ຮາດັດເອເຊີ ໄດ້ໃຊ້ຄົນໄປນຳຄົນຊີເຣຍທີ່ຢູ່ຟາກແມ່ນ້ຳຂ້າງນັ້ນອອກມາ, ພາພວກເຂົາມາ
ຍັງເມືອງ ເຮລາມ ໂດຍແມ່ນມີ ໂຊບາກ ຜູ້ບັນຊາການຂອງ ຮາດັດເອເຊີ ເປັນຜູ້ນຳໜ້າ.
17ເມື່ອມີຜູ້ມາກາບທູນ ດາວິດ ພະອົງກໍລວບລວມ ອິສຣາເອນ ທັງໝົດຂ້າມແມ່ນ້ຳຢໍແດນ ຈົນ
ມາຮອດ ເຮລາມ ແລະຄົນຊີເຣຍ ໄດ້ຕັ້ງທ່າເພື່ອຈະປະເຊີນໜ້າກັບ ດາວິດ ແລະໄດ້ສູ້ຮົບກັບພະ
ອົງ 18ຄົນຊີເຣຍກໍໜີຈາກ ອິສຣາເອນ ແລະ ດາວິດ ໄດ້ຂ້າຄົນຊີເຣຍຊຶ່ງເປັນທະຫານລົດຮົບເຈັດ
ຮ້ອຍຄົນກັບທະຫານມ້າສີ່ໝື່ນຄົນ ແລະຂ້າ ໂຊບາກ ຜູ້ບັນຊາການກອງທັບຂອງພວກເຂົາຕາຍ
ໃນບ່ອນນັ້ນ 19ເມື່ອບັນດາກະສັດຊຶ່ງຂຶ້ນກັບ ຮາດັດເອເຊີ ເຫັນວ່າຝ່າຍຕົນພ່າຍ ແພ້ຕໍ່ ອິສຣາເອນ
ແລ້ວ ພວກເຂົາກໍໄດ້ເຮັດ ສັນຕິພາບກັບ ອິສຣາເອນ ແລະຍອມເປັນຜູ້ຮັບໃຊ້ຄົນ ອິສຣາເອນ
ດັ່ງນັ້ນ ຄົນຊີເຣຍຈຶ່ງຢ້ານບໍ່ກ້າຊ່ວຍຄົນ ອຳໂມນ ອີກຕໍ່ໄປ.

# ບົດທີ 11

## ດາວິດແລະບັດເຊບາ

1ໃນປີຕໍ່ມາ ພໍຕົກລະດູແລ້ງ ເປັນລະດູທີ່ບັນດາເຈົ້າຊີວິດໄດ້ເຄີຍອອກໄປຮົບເສິກ ດາວິດກໍ
ສັ່ງ ໂຢອາບ ພ້ອມທັງພວກນາຍທະຫານຂອງພະອົງ ແລະກອງທັບ ອິສຣາເອນອອກໄປ ພວກ
ເຂົາໄດ້ຊະນະຊາວ ອຳໂມນ ແລະອ້ອມເມືອງ ຣັບບາ ໄວ້ ແຕ່ ດາວິດ ໄດ້ຢູ່ໃນນະຄອນ ເຢຣູຊາ-
ເລັມ. 2ໃນຕອນແລງຂອງມື້ນັ້ນ ດາວິດ ໄດ້ຕື່ນແຕ່ນອນ ຂຶ້ນໄປເທິງຫລັງຄາພຽງຂອງພະລາ-
ຊະວັງ ພະອົງໄດ້ຍ່າງໄປມາເທິງຫລັງຄານັ້ນ ພະອົງຈຶ່ງເຫັນຍິງຄົນໜຶ່ງກຳລັງອາບນ້ຳຢູ່ ນາງ
ເປັນຄົນງາມຫລາຍ. 3ດັ່ງນັ້ນ ດາວິດກໍສັ່ງຄົນອອກໄປສືບຖາມເບິ່ງວ່ານາງເປັນໃຜ? ແລ້ວໄດ້ຮູ້
ວ່ານາງຊື່ວ່າ ບັດເຊບາ ລູກສາວຂອງ ເອລີອາມ ແລະເປັນເມຍຂອງ ອູຣີຢາ ຊາວ ຮິດຕີ.
4ດາວິດ ໄດ້ສັ່ງຄົນໄປນຳເອົານາງມາ ພວກເຂົາກໍພານາງມາຫາພະອົງ ແລ້ວ ດາວິດກໍສົມສູ່ຢູ່

ກັບນາງ ຫລັງຈາກນັ້ນນາງກໍກັບເມືອເຮືອນ (ໃນລະຫວ່າງນີ້ເປັນເວລາທີ່ນາງເຊົາເປັນລະດູ
ແລະເຮັດພິທີຊໍາລະຕົນໃຫ້ບໍລິສຸດແລ້ວໆ) 5ເມື່ອນາງຮູ້ວ່ານາງຖືພາ ນາງກໍສົ່ງຂ່າວໄປບອກ
ດາວິດ.
6ສ່ວນດາວິດກໍສົ່ງຂ່າວໄປຫາໂຢອາບວ່າ, "ໃຫ້ທ່ານສົ່ງອູຣີຢາ ຄົນຮິດຕີມາຫາຂ້ອຍແດ່"
ໂຢອາບກໍສົ່ງອູຣີຢາໄປຫາດາວິດ. 7ເມື່ອອູຣີຢາມາຮອດ ດາວິດກໍຖາມລາວວ່າ ໂຢອາບ ແລະ
ກອງທະຫານຍັງສະບາຍດີຢູ່ບໍ ແລະການຕໍ່ສູ້ເດເປັນຢ່າງໃດ. 8ແລ້ວດາວິດກໍບອກອູຣີຢາວ່າ,
"ຈົ່ງກັບຄືນເມືອພັກຜ່ອນຈັກຄາວຢູ່ເຮືອນເຈົ້າສາ" ອູຣີຢາກໍຈາກໄປ ດາວິດໄດ້ຈັດຂອງຂວັນນໍາ
ສົ່ງໃຫ້ລາວໄປເຖິງເຮືອນ. 9ແຕ່ວ່າ ແທນທີ່ອູຣີຢາຈະເມືອເຮືອນ ລາວກັບໄປນອນທີ່ປະຕູກໍາ-
ແພງພະລາຊະວັງນໍາທະຫານຂອງເຈົ້າຊີວິດ.
10ເມື່ອດາວິດຮູ້ວ່າ ອູຣີຢາບໍ່ໄດ້ເມືອເຮືອນ ພະອົງຈຶ່ງຖາມລາວວ່າ, "ເຈົ້າບໍ່ໄດ້ກັບຄືນເມືອ
ເຮືອນແຕ່ດົນແລ້ວບໍ? ເປັນຫຍັງຈຶ່ງບໍ່ເມືອຮອດເຮືອນປານນີ້." 11ອູຣີຢາທູນຕອບວ່າ, "ທະຫານ
ອິສຣາເອນ ແລະຢູດາກໍກໍາລັງຢູ່ໃນສະໜາມຮົບ ສ່ວນຫີບຄໍາສັນຍາກໍຢູ່ກັບພວກເຂົາ ແລະ
ໂຢອາບຜູ້ບັງຄັບບັນຊາຂອງຂ້ານ້ອຍ ພ້ອມທັງພວກນາຍທະຫານຂອງເພິ່ນກໍຕັ້ງຄ້າຍພັກຢູ່ທາງ
ອອກນັ້ນ ເຫດໃດຂ້ານ້ອຍຈຶ່ງຈະກັບເມືອກິນເຂົ້າ ກິນນໍ້າ ແລະນອນນໍາເມຍຢູ່ເຮືອນໄດ້? ຂ້າ-
ນ້ອຍຂໍສາບານຕໍ່ພຣະເຈົ້າອົງມີຊີວິດຢູ່ວ່າ ຂ້ານ້ອຍຈະບໍ່ເຮັດຢ່າງນີ້ເດັດຂາດ." 12ດາວິດກໍເວົ້າ
ວ່າ, "ສໍາລັບມື້ນີ້ໃຫ້ເຈົ້າພັກຢູ່ນີ້ເສຍກ່ອນ ມື້ອື່ນຂ້ອຍຈະສົ່ງເຈົ້າກັບຄືນເມືອ" ດັ່ງນັ້ນ ໃນມື້ນັ້ນ
ແລະມື້ຕໍ່ມາ ອູຣີຢາຈຶ່ງພັກຢູ່ນະຄອນເຢຣູຊາເລັມ. 13ດາວິດໄດ້ເຊີນໃຫ້ລາວມາກິນເຂົ້ານໍາ
ແລະເກືອເຫລົ້າລາວໃຫ້ເມົາ ແຕ່ວ່າໃນຄືນນັ້ນ ອູຣີຢາກໍຍັງບໍ່ກັບຄືນເມືອເຮືອນ ລາວນອນຮົ່ມ
ຜ້າຢູ່ໃນຫ້ອງພະລາຊະວັງ.
14ເຊົ້າມື້ໃໝ່ມາ ດາວິດໄດ້ຂຽນຈົດໝາຍສົ່ງນໍາອູຣີຢາໄປຫາໂຢອາບ. 15ພະອົງຂຽນວ່າ,
"ໃຫ້ເຈົ້າສົ່ງອູຣີຢາໄປແນວໜ້າບ່ອນທີ່ເຂົາສູ້ຮົບກັນຢ່າງໜັກ ແລ້ວໃຫ້ພວກເຈົ້າເອງຖອຍຄືນ
ຫລັງ ເພື່ອປ່ອຍໃຫ້ອູຣີຢາຖືກຂ້າຕາຍຢູ່ທີ່ນັ້ນ."
16ດັ່ງນັ້ນ ໃນຂະນະທີ່ໂຢອາບກໍາລັງອ້ອມເມືອງຢູ່ນັ້ນ ໂຢອາບໄດ້ສົ່ງອູຣີຢາອອກໄປໃນ
ບ່ອນທີ່ລາວຮູ້ວ່າ ມີພວກສັດຕູເຂັ້ມແຂງຫລາຍ. 17ເມື່ອກອງທັບສັດຕູອອກມາຈາກເມືອງກໍໄດ້
ພົບກັບກໍາລັງຂອງໂຢອາບ ແລະໄດ້ເກີດການສູ້ຮົບກັນຂຶ້ນທັນທີ ພວກນາຍທະຫານຂອງດາ-
ວິດບາງຄົນລວມທັງອູຣີຢາກໍຖືກສັດຕູສັງຫານ.
18-19ຕໍ່ມາ ໂຢອາບກໍສົ່ງລາຍງານການຮົບເສິກໄປບອກດາວິດ ລາວໄດ້ແນະນໍາຜູ້ນໍາຂ່າວ
ວ່າ, "ຫລັງຈາກທີ່ເຈົ້າໄດ້ລາຍງານທຸກສິ່ງກ່ຽວກັບການສູ້ຮົບແກ່ເຈົ້າຊີວິດແລ້ວ. 20ບາງທີພະອົງ
ຈະໃຈຮ້າຍ ແລະອາດຖາມເຈົ້າວ່າ "ເປັນຫຍັງພວກເຈົ້າຈຶ່ງເຂົ້າໄປສູ້ຮົບກັບເຂົາຢູ່ໃກ້ເມືອງແທ້?
ພວກເຈົ້າບໍ່ຄິດບໍວ່າ ພວກເຂົາຈະຕ້ອງຍິງທະນູອອກຈາກກໍາແພງເມືອງໃສ່ພວກເຈົ້າ? 21ພວກ
ເຈົ້າບໍ່ຈື່ບໍ ເວລາທີ່ພວກອາບີເມເລັກ ລູກຊາຍຂອງເຢຣູເບເຊັດຖືກຂ້າຕາຍນັ້ນວ່າເປັນຢ່າງ-
ໃດ? ຄືພວກຜູ້ຍິງໃນເມືອງເທເບດ ໄດ້ແກວ່ງຫີນໂມ້ແປ້ງລົງມາຈາກກໍາແພງເມືອງຖືກອາບີ-
ເມເລັກຕາຍ ແລ້ວເປັນຫຍັງພວກເຈົ້າຈຶ່ງເຂົ້າໄປໃກ້ກໍາແພງເມືອງແທ້? ຖ້າເຈົ້າຊີວິດຖາມເຈົ້າ

ດັ່ງນີ້ ຈົ່ງບອກເພິ່ນວ່າ ອູຣີຢານາຍທະຫານຂອງພຣະອົງກໍຖືກຂ້າຄືກັນ.”
22-23ດັ່ງນັ້ນ ຜູ້ນຳຂ່າວຈຶ່ງກາບທູນດາວິດຕາມທີ່ໂຢອາບໄດ້ສັ່ງ ລາວເວົ້າວ່າ “ພວກສັດຕູມີ
ກຳລັງຫລາຍກວ່າພວກຂ້ານ້ອຍ ພວກເຂົາໄດ້ມາຕໍ່ສູ້ພວກຂ້ານ້ອຍຢູ່ນອກເມືອງ ແຕ່ພວກຂ້າ-
ນ້ອຍໄລ່ພວກເຂົາກັບຄືນໄປທາງປະຕູກຳແພງເມືອງ.
24ແລ້ວພວກເຂົາໄດ້ຍິງລູກທະນູລົງຈາກ
ກຳແພງເມືອງໃສ່ພວກຂ້ານ້ອຍ ພວກນາຍທະຫານບາງຄົນຂອງພະອົງຈຶ່ງຕາຍ ອູຣີຢານາຍ
ທະຫານຂອງພະອົງກໍຕາຍຄືກັນ.”
25ດາວິດຈຶ່ງເວົ້າຕໍ່ຜູ້ນຳຂ່າວນັ້ນວາ, “ຈົ່ງໃຫ້ກຳລັງໃຈແກ່
ໂຢອາບ ແລະບອກລາວຢ່າໃຫ້ເສຍໃຈ ເພາະໃຜກໍບໍ່ສາມາດບອກໄດ້ວ່າ ແມ່ນໃຜແດ່ຈະຖືກຂ້າ
ຕາຍໃນສະໜາມຮົບ ຈົ່ງບອກໃຫ້ລາວປະກາດການສູ້ຮົບຄັ້ງຍິ່ງໃຫຍ່ກັບເມືອງນັ້ນ ແລະຍຶດເອົາ
ເມືອງນັ້ນສາ.”
26ເມື່ອບັດເຊບາໄດ້ຍິນຂ່າວວ່າຜົວຂອງຕົນຖືກຂ້າ ນາງກໍໄດ້ໄວ້ທຸກໃຫ້ລາວ.
27ຄັນການໄວ້
ທຸກນັ້ນຜ່ານໄປແລ້ວ ດາວິດກໍເອົາບັດເຊບາມາຢູ່ໃນພະລາຊະວັງ ນາງກາຍເປັນເມຍຂອງພະ
ອົງແລະໄດ້ລູກຊາຍກັບພະອົງໜຶ່ງຄົນ ແຕ່ວ່າ ພຣະຜູ້ເປັນເຈົ້າບໍ່ຊົງພໍພຣະໄທກັບສິ່ງທີ່ດາວິດ
ໄດ້ເຮັດນັ້ນ.

# ບົດທີ 12

## ນາທານເຕືອນດາວິດ ແລະດາວິດໄດ້ກັບໃຈ

1ຕໍ່ມາ ພຣະຜູ້ເປັນເຈົ້າຊົງສັ່ງນາທານຜູ້ປະກາດພຣະທຳໄປຫາດາວິດ ນາທານໄດ້ເລົ່າ
ເລື່ອງໜຶ່ງສູ່ດາວິດຟັງວ່າ, “ຍັງມີຊາຍສອງຄົນຢູ່ໃນເມືອງດຽວກັນ ຜູ້ໜຶ່ງເປັນຄົນຮັ່ງມີ ແລະຜູ້
ໜຶ່ງເປັນຄົນທຸກຍາກ.
2ຊາຍຮັ່ງມີນັ້ນມີງົວ ແລະແກະຫລາຍໂຕ.
3ແຕ່ວ່າ ຊາຍຜູ້ທີ່ທຸກຍາກມີ
ພຽງແຕ່ແກະນ້ອຍໂຕດຽວທີ່ລາວຊື້ໄວ້ ລາວໄດ້ລ້ຽງຮັກສາແກະນ້ອຍນັ້ນໄວ້ ໄດ້ເອົາອາຫານ
ເກືອມັນ ແລະໃຫ້ມັນກິນນ້ຳໃນຈອກຂອງລາວທັງໃຫ້ນອນຢູ່ເທິງຕັກ ແກະນ້ອຍນັ້ນເປັນເໝືອນ
ລູກສາວຂອງລາວ.
4ແລະມັນໄດ້ໃຫຍ່ຂຶ້ນພ້ອມໆ ກັນກັບລູກຂອງລາວ ມື້ໜຶ່ງມີແຂກມາຢ້ຽມຢາມເຮືອນຂອງຄົນ
ຮັ່ງມີ ຄົນຮັ່ງມີບໍ່ຢາກຂ້າສັດຂອງຕົນໃຫ້ແຂກກິນ ລາວຊ້ຳພັດໄປເອົາແກະນ້ອຍຂອງຄົນທຸກ
ຍາກນັ້ນມາຂ້າແທນ.”
5ເມື່ອດາວິດໄດ້ຍິນດັ່ງນັ້ນ ກໍໃຈຮ້າຍຊາຍທີ່ຮັ່ງມີນັ້ນຢ່າງຮຸນແຮງ ແລະເວົ້າຂຶ້ນວ່າ, “ຂ້ອຍຂໍ
ສາບານຕໍ່ພຣະຜູ້ເປັນເຈົ້າອົງຊົງພຣະຊົນຢູ່ວ່າ ຊາຍທີ່ເຮັດຢ່າງນັ້ນຈະຕ້ອງຕາຍ.
6ລາວຕ້ອງ
ໃຊ້ຄືນສີ່ເທົ່າທີ່ລາວໄດ້ເອົາໄປນັ້ນ ເພາະລາວໄດ້ເຮັດໃນສິ່ງທີ່ໂຫດຮ້າຍທີ່ສຸດ.”
7ນາທານຈຶ່ງເວົ້າຕໍ່ດາວິດວ່າ, “ພະອົງນັ້ນແຫລະເປັນຊາຍຄົນນັ້ນ ຕໍ່ໄປນີ້ແມ່ນຄຳທີ່ພຣະຜູ້-
ເປັນເຈົ້າຂອງຊາວອິສຣາເອນ ໄດ້ກ່າວໄວ້ຄື ເຮົາໄດ້ແຕ່ງຕັ້ງໃຫ້ເຈົ້າເປັນເຈົ້າຊີວິດຂອງຊາວອິ-
ສຣາເອນ ແລະຊ່ອຍຊີວິດເຈົ້າໃຫ້ພົ້ນຈາກເງື້ອມມືຂອງຊາອູນ.
8ເຮົາໄດ້ມອບລາຊະອານາຈັກ
ຂອງຊາອູນ ແລະພວກເມຍຂອງລາວໃຫ້ແກ່ເຈົ້າ ເຮົາໄດ້ແຕ່ງຕັ້ງເຈົ້າເປັນເຈົ້າຊີວິດປົກຄອງ
ລາຊະອານາຈັກອິສຣາເອນ ແລະຢູດາ ຖ້າວ່າສິ່ງເຫລົ່ານີ້ຍັງບໍ່ທັນພຽງພໍເທື່ອ ເຮົາອາດຈະໃຫ້

ເຈົ້າຫລາຍກວ່ານີ້ສອງເທົ່າ. [9]ເປັນຫຍັງເຈົ້າຈຶ່ງປະໝາດຄຳສັ່ງຂອງເຮົາ? ແລະເປັນຫຍັງເຈົ້າຈຶ່ງ
ເຮັດສິ່ງຊົ່ວຊ້າແບບນີ້? ເຈົ້າໄດ້ເຮັດໃຫ້ອູຣີຢາຖືກຂ້າຢູ່ໃນສະໜາມຮົບ ເຈົ້າປ່ອຍໃຫ້ພວກອຳ-
ໂມນຂ້າລາວ ແລ້ວເຈົ້າກໍເອົາເມຍຂອງລາວ. [10]ບັດນີ້ ເຊື້ອສາຍຂອງເຈົ້າຈະມີຜູ້ຖືກຂ້າຢ່າງ
ໂຫດຮ້າຍທາລຸນຕະຫລອດໄປ ເພາະວ່າເຈົ້າບໍ່ເຊື່ອຟັງເຮົາ ແລະໄດ້ເອົາເມຍຂອງອູຣີຢາ.
[11]ເຮົາຂໍເວົ້າຢ່າງເດັດຂາດຕໍ່ເຈົ້າວ່າ ເຮົາຈະໃຫ້ຜູ້ໜຶ່ງໃນຄອບຄົວຂອງເຈົ້າເປັນຜູ້ນຳເອົາຄວາມ-
ທຸກຍາກລຳບາກມາສູ່ເຈົ້າ ເຈົ້າຈະໄດ້ເຫັນເຫດການດັ່ງນີ້ຄື ເມື່ອເຮົາຈະເອົາພວກເມຍຂອງເຈົ້າ
ຍົກໃຫ້ແກ່ຊາຍຄົນອື່ນ ແລະຊາຍຄົນນັ້ນຈະສົມສູ່ຢູ່ຮ່ວມກັບພວກນາງຢ່າງເປີດເຜີຍ. [12]ເຈົ້າໄດ້
ເຮັດຜິດຢ່າງລັບລີ້ ແຕ່ເຮົາຈະສະແດງໃຫ້ພວກອິສຣາເອນເຫັນໃນສິ່ງທີ່ຊາຍຄົນນັ້ນເຮັດຢ່າງ
ເປີດເຜີຍ.”

[13]ຝ່າຍດາວິດກໍເວົ້າຂຶ້ນວ່າ, “ຂ້າພະເຈົ້າໄດ້ເຮັດຜິດຕໍ່ພຣະຜູ້ເປັນເຈົ້າແລ້ວ.” ນາທານຈຶ່ງ
ເວົ້າວ່າ, “ພະອົງຈະບໍ່ຕາຍ ເພາະພຣະຜູ້ເປັນເຈົ້າຈະຊົງຍົກໂທດໃຫ້ພະອົງ. [14]ແຕ່ວ່າ ລູກຂອງ
ພະອົງຈະຕາຍ ເພາະວ່າພະອົງເຮັດຢ່າງນີ້ເປັນການໝິ່ນປະໝາດພຣະຜູ້ເປັນເຈົ້າ.”

[15]ແລ້ວນາທານກໍກັບຄືນເມືອເຮືອນ.

## ລູກຊາຍດາວິດຕາຍ ແລະໂຊໂລໂມນເກີດ

ຕໍ່ມາ ພຣະຜູ້ເປັນເຈົ້າຊົງເຮັດໃຫ້ລູກຊາຍທີ່ດາວິດໄດ້ນຳເມຍຂອງອູຣີຢາໄຂ້ໜັກ. [16]ດາວິດ
ໄດ້ອ້ອນວອນຂໍໃຫ້ພຣະເຈົ້າໂຜດຊ່ອຍໃຫ້ລູກຊາຍດີ ແລະທຸກໆ ຄືນດາວິດໄດ້ໄປນອນຢຽດຢູ່
ໃນພື້ນຫ້ອງນອນຂອງພະອົງ ໂດຍບໍ່ຍອມກິນເຂົ້າ. [17]ພວກຂ້າລາຊະການໃນພະລາຊະວັງຂອງ
ພະອົງ ໄດ້ຊັກຊວນໃຫ້ພະອົງລຸກຂຶ້ນ ແຕ່ພະອົງກໍປະຕິເສດແລະບໍ່ຍອມກິນຫຍັງໝົດ.

[18]ອາທິດຕໍ່ມາ ລູກຊາຍຂອງດາວິດກໍຕາຍ ພວກຂ້າລາຊະການຂອງພະອົງບໍ່ກ້ານຳຂ່າວນັ້ນ
ມາບອກພະອົງ ພວກເຂົາໄດ້ເວົ້າກັນວ່າ, “ເມື່ອເດັກນ້ອຍຍັງມີຊີວິດຢູ່ ພວກເຮົາໄດ້ຖາມພະອົງ
ແຕ່ພະອົງບໍ່ຍອມຕອບພວກເຮົາເລີຍ ເຫດໃດພວກເຮົາຈຶ່ງຈະບອກພະອົງໄດ້ວ່າ ລູກຂອງພະອົງ
ເສຍຊີວິດແລ້ວ? ພະອົງອາດເຮັດໃນສິ່ງທີ່ບໍ່ດີບໍ່ງາມກໍເປັນໄດ້.”

[19]ເມື່ອພວກເຂົາກຳລັງລົມກັນຢູ່ ດາວິດກໍເຂົ້າໃຈວ່າລູກຂອງພະອົງໄດ້ຕາຍແລ້ວ ດັ່ງນັ້ນ
ພຣະອົງຈຶ່ງຖາມພວກເຂົາວ່າ, “ລູກຂ້ອຍຕາຍແລ້ວແມ່ນບໍ?” ພວກເຂົາກໍຕອບວ່າ, “ຕາຍແລ້ວ.”
[20]ດາວິດກໍລຸກຂຶ້ນໄປອາບນໍ້າຫວີຜົມ ແລະປ່ຽນເຄື່ອງນຸ່ງ ແລ້ວພະອົງກໍໄປນະມັດສະການທີ່
ພຣະວິຫານຂອງພຣະຜູ້ເປັນເຈົ້າ ເມື່ອພະອົງກັບຄືນມາສູ່ພະລາຊະວັງ ພະອົງກໍຖາມຫາອາ-
ຫານ ແລະພວກເຂົາໄດ້ຈັດແຈງອາຫານໃຫ້ພະອົງສະເຫວີຍໃນທັນທີທັນໃດນັ້ນ.

[21]ພວກຂ້າລາຊະການຂອງພະອົງຈຶ່ງຖາມພະອົງວ່າ “ເມື່ອເດັກນ້ອຍຍັງມີຊີວິດຢູ່ ພະອົງຊົງ
ໂສກເສົ້າຮ້ອງໄຫ້ ແລະ ບໍ່ຍອມສະເຫວີຍອາຫານ ແຕ່ເມື່ອເດັກນ້ອຍໄດ້ຕາຍໄປແລ້ວ ພະອົງກໍ
ຊົງລຸກຂຶ້ນ ແລະສະເຫວີຍອາຫານໄດ້ ພວກຂ້ານ້ອຍບໍ່ເຂົ້າໃຈເຫດການຢ່າງນີ້ເລີຍ.” [22]ດາວິດ
ຕອບວ່າ, “ເມື່ອລູກນ້ອຍຍັງມີຊີວິດຢູ່ຂ້ອຍໄດ້ອົດອາຫານໂສກເສົ້າຮ້ອງໄຫ້ ເພາະເຮົາຄິດວ່າ
ພຣະຜູ້ເປັນເຈົ້າອາດຈະຊົງເມດຕາປະທານຊີວິດໃຫ້ແກ່ເດັກນ້ອຍນັ້ນ. [23]ແຕ່ວ່າ ດຽວນີ້ລູກໄດ້
ຕາຍແລ້ວ ເຮົາຈະອົດອາຫານໄປເຮັດຫຍັງ? ຖ້າຂ້ອຍອົດອາຫານຊີວິດເດັກນ້ອຍນັ້ນຈະກັບຄືນ

ມາໄດ້ອີກບໍ? ມື້ໜຶ່ງ ເຮົາອາດຈະໄປບ່ອນດຽວກັນກັບລູກຢູ່ ແຕ່ລູກນັ້ນຈະມາຫາເຮົາບໍ່ໄດ້.”
[24]ຕໍ່ມາ ດາວິດກໍອອຍໃຈບັດເຊບາຜູ້ເປັນເມຍ ພະອົງໄດ້ສົມສູ່ຢູ່ຮ່ວມກັບນາງ ແລະນາງກໍ
ອອກລູກເປັນຊາຍອີກ ດາວິດໄດ້ໃສ່ຊື່ໃຫ້ວ່າ ໂຊໂລໂມນ ພຣະຜູ້ເປັນເຈົ້າຊົງຮັກເດັກນ້ອຍນີ້.
[25]ພຣະອົງຈຶ່ງຊົງໃຫ້ນາທານຜູ້ປະກາດພຣະທຳສັ່ງໃຫ້ດາວິດໃສ່ຊື່ເດັກນີ້ວ່າ ເຢດີດີຢາ ເພາະ-
ວ່າ ພຣະຜູ້ເປັນເຈົ້າຊົງຮັກລາວ.

## ດາວິດຍຶດເອົາເມືອງຣັບບາ

[26]ສ່ວນໂຢອາບກຳລັງໂຈມຕີເມືອງຣັບບາຢູ່ ຊຶ່ງເປັນເມືອງຫລວງຂອງຊາວອຳໂມນ ແລະກໍ
ໃກ້ຈະຍຶດເອົາໄດ້ແລ້ວ. [27]ລາວຈຶ່ງສົ່ງຜູ້ນຳຂ່າວໄປລາຍງານຕໍ່ດາວິດວ່າ, “ຂ້ານ້ອຍໄດ້ໂຈມຕີ
ເມືອງຣັບບາ ແລະຍຶດເອົາບໍ່ນໍ້າໄດ້ແລ້ວ. [28]ດຽວນີ້ໃຫ້ພະອົງຮວບຮວມເອົາກຳລັງຂອງພະອົງທີ່
ຍັງເຫລືອຢູ່ນັ້ນມາຕໍ່ສູ້ ແລະຍຶດເອົາຕົວເມືອງດ້ວຍພະອົງເອງເທີ້ນ ເພາະວ່າຂ້ານ້ອຍບໍ່ຢາກໄດ້
ຊື່ສຽງຍ້ອນຍຶດເອົາເມືອງນີ້.”
[29]ດັ່ງນັ້ນ ດາວິດຈຶ່ງຮີບໂຮມເອົາກຳລັງຂອງພະອົງອອກໄປເມືອງຣັບບາ ແລ້ວກໍສັ່ງບຸກຍຶດ
ເອົາເມືອງນັ້ນ. [30]ດາວິດໄດ້ເອົາກະໂຈມຮູບເຄົາລົບຂອງພວກເຂົາ ມາສຸບໃສ່ຫົວຂອງພະອົງ
ກະໂຈມນີ້ເປັນຄຳໜັກປະມານສາມສິບຫ້າກິໂລກລາມ ແລະມີເພັດປະດັບຢູ່ເທິງກະໂຈມນີ້ ແລ້ວ
ພະອົງຍັງໄດ້ເອົາຊັບສົມບັດຈາກເມືອງນີ້ໄປຢ່າງຫລວງຫລາຍ. [31]ສ່ວນປະຊາຊົນໃນເມືອງນັ້ນ
ດາວິດໄດ້ເອົາເລື່ອຍ ຈົກ ຂວານໃຫ້ເຂົາ ແລະໃຊ້ໃຫ້ພວກເຂົາເຮັດວຽກໃນເຕົາເຜົາດິນຈີ່ ພະ
ອົງໄດ້ເຮັດຢ່າງດຽວກັນກັບປະຊາຊົນຊາວອຳໂມນໃນທຸກໆ ເມືອງ ແລ້ວພະອົງໄດ້ກັບຄືນສູ່
ນະຄອນເຢຣູຊາເລັມ.

# ບົດທີ 13

## ອຳໂນນຂົ່ມຂືນນາງຕາມາ

[1]ຢູ່ຕໍ່ມາຫລັງຈາກນັ້ນ ຝ່າຍອັບຊາໂລມລູກຊາຍຂອງດາວິດມີນ້ອງສາວຊື່ ຕາມາເປັນຄົນ
ຮູບຮ່າງງາມ ຫລາຍ ແລະອຳໂນນລູກຊາຍຂອງດາວິດກໍຮັກນາງ [2]ອຳໂນນເປັນທຸກໃຈຈົນລົ້ມ
ປ່ວຍຍ້ອນນາງຕາມານ້ອງສາວຂອງຕົນ ເພາະວ່ານາງເປັນສາວພົມມະຈາລີອຳໂນນ ຈຶ່ງຮູ້ສຶກ
ວ່າຈະເຮັດສິ່ງໃດກັບນາງກໍຍາກຫຼາຍ.
[3]ແຕ່ອຳໂນນມີເພື່ອນຄົນໜຶ່ງຊື່ໂຢນາດາບລູກຊາຍຂອງຊິເມອານ້ອງຊາຍຂອງດາວິດ ໂຢ-
ນາດາບນັ້ນເປັນຄົນສະຫຼາດຫຼາຍ [4]ຈຶ່ງທູນຖາມວ່າ “ຂ້າແດ່ລູກຊາຍຂອງກະສັດ ເຫດໃດຜູ້ເປັນ
ບຸດຂອງກະສັດຈຶ່ງຈ່ອຍລົງທຸກໆມື້, ຈະບໍ່ບອກ ໃຫ້ຂ້າພະເຈົ້າຮູ້ນຳບໍ?” ອຳໂນນຕອບລາວວ່າ
“ຂ້ອຍຮັກຕາມານ້ອງສາວຂອງອັບຊາໂລມນ້ອງຊາຍຂອງຂ້ອຍ” [5]ໂຢນາດາບຈຶ່ງທູນເພິ່ນວ່າ
“ຂໍເຊີນບັນທົມເທິງຕຽງນອນຂອງທ່ານເຮັດທຳທ່າບໍ່ສະບາຍ ແລະເມື່ອສະເດັດພໍ່ມາ ຢ້ຽມທ່ານ
ຈົ່ງກາບທູນວ່າ ຂໍໂຜດຮັບສັ່ງໃຫ້ຕາມານ້ອງສາວມາຕຽມອາຫານຕໍ່ໜ້າຂອງຂ້າພະອົງ ເພື່ອ
ຂ້າພະອົງຈະໄດ້ເຫັນ ແລະໄດ້ຮັບປະທານຈາກມືຂອງນາງ.’”
[6]ອຳໂນນຈຶ່ງບັນທົມທຳທ່າບໍ່ສະບາຍ ເມື່ອກະສັດສະເດັດມາ ອຳໂນນກໍທູນກະສັດວ່າ “ຂໍ

ໂຜດໃຫ້ຕາມານ້ອງສາວມາເຮັດເຂົ້າໜົມຈັກສອງອັນຕໍ່ໜ້າຂ້າພະອົງ ເພື່ອຂ້າພະອົງຈະໄດ້ຮັບ
ປະທານຈາກມືຂອງນາງ."
7ດາວິດຊົງໃຊ້ຄົນໄປຫາຕາມາທີ່ວັງຮັບສັ່ງວ່າ "ຂໍຈົ່ງໄປທີ່ເຮືອນຂອງອຳໂນນອ້າຍຂອງເຈົ້າ
ແລະຕຽມອາຫານສຳລັບເພິ່ນສາ" 8ຕາມາກໍໄປວັງຂອງອຳໂນນອ້າຍຂອງນາງບ່ອນທີ່ລາວບັນ-
ທົມຢູ່ ນາງກໍຫຍິບແປ້ງມານວດເຮັດເຂົ້າໜົມຕໍ່ໜ້າອຳໂນນ ແລ້ວຈືນເຂົ້າໜົມນັ້ນ 9ແລະນາງກໍ
ຍົກເອົາໝໍ້ຈືນໄປຖອກເຂົ້າໜົມອອກຕໍ່ໜ້າອຳໂນນ ແຕ່ອຳໂນນກໍບໍ່ຮັບປະທານ ແລະອຳໂນນ
ໄດ້ບອກວ່າ "ໃຫ້ທຸກຄົນອອກໄປໃຫ້ພົ້ນເຮົາ" ທຸກຄົນກໍອອກໄປຈາກບ່ອນນັ້ນ.
10ອຳໂນນສັ່ງຕາມາວ່າ "ຈົ່ງເອົາອາຫານເຂົ້າມາໃນຫ້ອງນອນຂ້າງໃນ ເພື່ອອ້າຍຈະໄດ້ຮັບ
ປະທານຈາກມື ຂອງນ້ອງ" ຕາມາກໍນຳເອົາເຂົ້າໜົມທີ່ນາງເຮັດນັ້ນເຂົ້າໄປໃນຫ້ອງເພື່ອໃຫ້ແກ່
ອຳໂນນອ້າຍຂອງຕົນ 11ແຕ່ເມື່ອນາງນຳເຂົ້າໜົມມາໃກ້ເພື່ອໃຫ້ອຳໂນນຮັບປະທານ ລາວກໍຈັບ
ມືນາງໄວ້ເວົ້າວ່າ "ນ້ອງຂອງອ້າຍເຂົ້າມານອນກັບອ້າຍສາ."
12ນາງຕອບອຳໂນນວ່າ "ບໍ່ໄດ້ດອກອ້າຍເອີຍ ຢ່າໃຫ້ນ້ອງເສຍກຽດຕິຍົດ ເພາະສິ່ງນີ້ຜິດ
ທຳນຽມໃນອິສຣາເອນ ຢ່າເຮັດການທີ່ໜ້າອັບອາຍຢ່າງນີ້ເລີຍ 13ຝ່າຍຂ້ານ້ອຍ ຂ້ານ້ອຍຈະເອົາ
ຄວາມອັບອາຍໄປເຊື່ອງໄວ້ບ່ອນໃດ ແລະຝ່າຍທ່ານ ທ່ານຈະເປັນເໝືອນຄົນໂງ່ຈ້າຄົນໜຶ່ງໃນ
ອິສຣາເອນ ເພາະສະນັ້ນ ບັດນີ້ຂໍກາບທູນຕໍ່ກະສັດພະອົງຄົງຈະບໍ່ຫວງຂ້ານ້ອຍໄວ້ ບໍ່ໃຫ້ທ່ານ
ດອກ" 14ແຕ່ເພິ່ນບໍ່ຟັງຄຳຂອງນາງ ຍ້ອນເພິ່ນມີກຳລັງຫລາຍກວ່າ ຈຶ່ງຂົ່ມຂືນ ແລະນອນຮ່ວມ
ກັບນາງ 15ຕໍ່ມາອຳໂນນກຽດຊັງນາງຫຼາຍ ຄວາມກຽດຊັງນັ້ນກໍຫລາຍກວ່າຄວາມຮັກທີ່ເພິ່ນໄດ້
ຮັກນາງມາກ່ອນ ແລະອຳໂນນກ່າວສັ່ງນາງວ່າ "ຈົ່ງລຸກຂຶ້ນໜີໄປສະ."
16ແຕ່ນາງຕອບເພິ່ນວ່າ "ຢ່າເລີຍ ທີ່ຈະໄລ່ຂ້ານ້ອຍໄປກໍເປັນຄວາມຜິດອັນຍິ່ງໃຫຍ່ຫຼາຍກວ່າ
ຄວາມຜິດທີ່ອ້າຍໄດ້ເຮັດກັບນ້ອງມາແລ້ວ" ແຕ່ເພິ່ນບໍ່ໄດ້ເຊື່ອຟັງນາງ 17ເພິ່ນຈຶ່ງເອີ້ນຄົນໃຊ້ໜຸ່ມ
ຜູ້ໜຶ່ງມາ ແລະສັ່ງວ່າ "ຈົ່ງໄລ່ຜູ້ຍິງຄົນນີ້ອອກໄປໃຫ້ພົ້ນຈາກໜ້າຂອງເຮົາແລ້ວປິດປະຕູໃສ່ໄລ"
18ນາງສວມເສື້ອຍາວຫຼາຍສີ ຊຶ່ງພວກລູກສາວຂອງກະສັດຜູ້ເປັນຍິງພົມມະຈາລີນຸ່ງກັນຢ່າງນັ້ນ
ຄົນໃຊ້ຂອງອຳໂນນໄດ້ຂັບໄລ່ນາງອອກໄປ ແລະໃສ່ໄລປະຕູ 19ນາງຕາມາກໍເອົາຂີ້ເທົ່າໃສ່ເທິງ
ຫົວຂອງນາງ ແລະຈີກເສື້ອຍາວຫຼາຍສີທີ່ນາງນຸ່ງຢູ່ນັ້ນ ເອົາມືປົກຫົວ ແລະຍ່າງ ໄປຫົງຮ້ອງ-
ໄຫ້.
20ອັບຊາໂລມອ້າຍຂອງນາງກ່າວກັບນາງວ່າ "ອ້າຍອຳໂນນໄດ້ສົມສູ່ກັບນ້ອງບໍ? ນ້ອງເອີຍ
ຈົ່ງມິດຢູ່ເພາະລາວເປັນອ້າຍຂອງເຈົ້າ ຢ່າທຸກຮ້ອນໃຈເພາະເລື່ອງນີ້ເລີຍ" ຝ່າຍຕາມາກໍຢູ່ໂດດ-
ດ່ຽວໃນວັງຂອງອັບຊາໂລມອ້າຍຂອງຕົນ.
21ເມື່ອກະສັດດາວິດໄດ້ຍິນເລື່ອງເຫລົ່ານີ້ທັງໝົດ ພະອົງກໍເຄືອງໃຈຫຼາຍ 22ແຕ່ອັບຊາໂລມ
ບໍ່ໄດ້ກ່າວປະການໃດກັບອຳໂນນເລີຍບໍ່ວ່າດີ ຫລືຮ້າຍ ເພາະອັບຊາໂລມກຽດຊັງອຳໂນນ ທີ່
ເພິ່ນໄດ້ຂົ່ມຂືນຕາມານ້ອງສາວຂອງຕົນ.

## ອັບຊາໂລມຂ້າອຳໂນນ

23ຕໍ່ມາອີກສອງປີເຕັມ ອັບຊາໂລມມີງານຕັດຂົນແກະທີ່ບາອານ-ຮາໂຊ ຊຶ່ງຢູ່ໃກ້ກັບເອ-

ຟຣາຢິມ ແລະອັບຊາ ໂລມໄດ້ເຊີນລູກຊາຍທັງໝົດຂອງກະສັດໄປໃນງານນັ້ນ 24ອັບຊາໂລມ
ໄປເຝົ້າກະສັດທູນວ່າ “ເບິ່ງແມ ຂ້າພະອົງມີງານຕັດຂົນແກະ ຂໍເຊີນກະສັດ ແລະຂ້າລາຊະ-
ການຂອງພະອົງໄປຮ່ວມໃນງານນັ້ນກັບຂ້າພະອົງສາ.”

25ແຕ່ກະສັດກ່າວກັບອັບຊາໂລມວ່າ “ລູກເອີຍ ຢ່າເລີຍ ຢ່າໃຫ້ພວກເຮົາໄປໝົດທຸກຄົນ ຈະ
ເປັນພາລະໜັກ ແກ່ເຈົ້າລ້າໆ” ອັບຊາໂລມໄດ້ອ້ອນວອນພະອົງ ເຖິງປານນັ້ນ ພະອົງກໍບໍ່ຍອມ
ສະເດັດ ແຕ່ອຳນວຍພຣະພອນໃຫ້.

26ອັບຊາໂລມຈຶ່ງກາບທູນວ່າ “ຖ້າບໍ່ໂຜດສະເດັດກໍຂໍອະນຸຍາດໃຫ້ອ້າຍອຳໂນນໄປນຳພວກ
ເຮົາ” ແລະກະສັດກ່າວຖາມວ່າ “ເປັນຫຍັງລາວຕ້ອງໄປນຳເຈົ້າ” 27ແຕ່ອັບຊາໂລມໄດ້ທູນແລ້ວ
ທູນອີກຈົນພະອົງຊົງຍອມໃຫ້ອຳໂນນ ແລະລູກຊາຍຂອງກະສັດທັງໝົດໄປນຳ.

28ແລ້ວອັບຊາໂລມສັ່ງພວກຂ້າໃຊ້ຂອງຕົນວ່າ “ຈົ່ງຄອຍຖ້າເບິ່ງວ່າ ຈິດໃຈຂອງອຳໂນນ
ເພີດເພີນດ້ວຍເຫລົ້າ ອະງຸ່ນເມື່ອໃດ ເຮົາສັ່ງເຈົ້າວ່າ ‘ຈົ່ງຕີອຳໂນນ’ ເຈົ້າທັງຫລາຍຈົ່ງຂ້າລາວ
ຢ່າຊູ່ຢ້ານ ເຮົາສັ່ງເຈົ້າແລ້ວບໍ່ແມ່ນບໍ ເຮົາຈະຮັບຜິດຊອບໃນເລື່ອງນີ້ເອງ? ຈົ່ງກ້າຫານ ແລະ
ເປັນຄົນເກັ່ງກ້າເທີ້ນ” 29ແລະພວກຂ້າໃຊ້ຂອງອັບຊາໂລມໄດ້ເຮັດຕໍ່ອຳໂນນຕາມທີ່ອັບຊາໂລມ
ໄດ້ສັ່ງໄວ້ ແລ້ວບັນດາລູກຊາຍ ຂອງກະສັດກໍພາກັນຂຶ້ນຂີ່ລໍຂອງຕົນແຕ່ລະຄົນປົບໜີໄປໝົດ.

30ຕໍ່ມາໃນຂະນະທີ່ລູກຊາຍກຳລັງເດີນທາງມາ ມີຂ່າວໄປເຖິງດາວິດວ່າ “ອັບຊາໂລມໄດ້
ປະຫານຊີວິດລູກຊາຍ ຂອງກະສັດທັງໝົດແລ້ວບໍ່ເຫລືອຢູ່ຈັກຄົນ” 31ກະສັດໄດ້ລຸກຂຶ້ນຈີກ
ເຄື່ອງນຸ່ງຂອງພະອົງ ແລະນອນລົງເທິງພື້ນດິນ ບັນດາຂ້າລາຊະການທັງປວງສວມເສື້ອ ຜ້າທີ່
ຈີກຂາດກໍຢືນເຝົ້າຢູ່.

32ແຕ່ໂຢນາດາບລູກຊາຍຊີເມອາອ້າຍຂອງດາວິດກາບທູນວ່າ “ຢ່າໃຫ້ເຈົ້ານາຍຂອງຂ້າ-
ນ້ອຍຄິດຜິດໄປວ່າລາວ ໄດ້ຂ້າລູກຊາຍໜຸ່ມແໜ້ນເຫລົ່ານັ້ນໝົດແລ້ວ ເຫດວ່າມີອຳໂນນຜູ້ດຽວ
ທີ່ເສຍຊີວິດເພາະຕາມຄຳສັ່ງຂອງອັບຊາໂລມໃນເລື່ອງນີ້ເພິ່ນຕັ້ງໃຈໄວ້ ຕັ້ງແຕ່ອຳໂນນຂົ່ມຂືນ
ຕາມານ້ອງສາວຂອງເພິ່ນແລ້ວ 33ສະນັ້ນ ບັດນີ້ຂໍກະສັດເຈົ້ານາຍຂອງຂ້ານ້ອຍຢ່າໄດ້ຮ້ອນພະ
ໄທຄິດວ່າລູກຊາຍທັງໝົດຂອງກະສັດສິ້ນຊີວິດ ມີແຕ່ອຳໂນນເສຍຊີວິດຜູ້ດຽວ.”

34ສ່ວນອັບຊາໂລມໄດ້ໜີໄປ, ຝ່າຍທະຫານຍາມໜຸ່ມໄດ້ເງີຍໜ້າຂຶ້ນກໍຫລຽວເຫັນ ແລະເບິ່ງ
ແມ, ຝູງຄົນເປັນຈຳນວນຫຼວງຫຼາຍກຳລັງມາຕາມທາງຂ້າງພູເຂົາຊຶ່ງຢູ່ທາງຫລັງຂອງລາວ
35ໂຢນາດາບຈຶ່ງກາບທູນກະສັດວ່າ “ເບິ່ງແມ ພວກລູກຊາຍຂອງກະສັດມາແລ້ວ ຕາມທີ່ຜູ້ຮັບ
ໃຊ້ຂອງພະອົງ ກາບທູນກໍເປັນຈິງດັ່ງນັ້ນ.”

36ຢູ່ມາເມື່ອລາວເວົ້າຈົບລົງ ລູກຊາຍຂອງກະສັດກໍມາເຖິງ ແລະໄດ້ຮ້ອງໄຫ້ສຽງດັງ ຝ່າຍ
ກະສັດກໍຮ້ອງໄຫ້ ແລະບັນດາຂ້າລາຊະການກໍຮ້ອງໄຫ້ສະອຶກສະອື້ນດ້ວຍ.

## ອັບຊາໂລມໜີໄປເມືອງເກຊູ

37ອັບຊາໂລມໄດ້ໜີໄປເຂົ້າເຝົ້າຕານມາຍ ລູກຊາຍຂອງອຳມີຮູ ກະສັດເມືອງເກຊູ ແລະຊົງ
ຢູ່ບ່ອນນັ້ນເປັນເວລາສາມປີ. 38ສ່ວນດາວິດຮ້ອງໄຫ້ທຸກມື້ເຖິງບຸດຊາຍຂອງພະອົງຄື ອຳໂນນທີ່
ຖືກຂ້າເປັນເວລາຍາວນານ. 39ຈິດໃຈຂອງກະສັດດາວິດກໍຄິດເຖິງເຖິງອັບຊາໂລມ ສ່ວນການທີ່

ອາໄລເຖິງອຳໂນນນັ້ນຄ່ອຍຜ່ອນຄາຍລົງ ເພາະອຳໂນນໄດ້ສິ້ນຊີວິດໄປແລ້ວ.

# ບົດທີ 14

## ໂຢອາບນຳອັບຊາໂລມກັບມາຄືນດີກັນກັບດາວິດ

[1]ຝ່າຍ ໂຢອາບ ລູກຊາຍຂອງນາງ ເຊຣູຢາ ຮູ້ວ່າ ກະສັດຄິດເຖິງອັບຊາໂລມ [2]ໂຢອາບ ຈຶ່ງໃຊ້
ຄົນໄປເມືອງ ເຕໂກອາ ພາຜູ້ຍິງທີ່ສະຫລາດມາຈາກບ່ອນນັ້ນຄົນໜຶ່ງ ບອກນາງວ່າ “ຂໍຈົ່ງເຮັດ
ທຳທ່າເປັນຄົນໄວ້ທຸກສວມເສື້ອຂອງຄົນໄວ້ທຸກ ຢ່າທາ ວິຜົມ ແຕ່ທຳທ່າເຮັດຄືຜູ້ຍິງທີ່ໄວ້ທຸກໃຫ້ກັບ
ຜູ້ທີ່ຕາຍມາຫລາຍມື້ແລ້ວ [3]ຈົ່ງເຂົ້າໄປເຝົ້າກະສັດ ກາບທູນຂໍ້ຄວາມນີ້ແກ່ພະອົງ” ແລ້ວໂຢອາບກໍ
ສອນຄຳກາບທູນໃຫ້ຍິງຄົນນັ້ນ.
[4]ເມື່ອຍິງຊາວ ເຕໂກອາ ເຂົ້າມາເຝົ້າກະສັດ ນາງກໍກົ້ມໜ້າລົງເຖິງດິນແລ້ວກາບທູນວ່າ “ຂ້າ
ແດ່ກະສັດຂໍໂຜດຊ່ວຍຜູ້ຂ້າ” [5]ກະສັດກ່າວຖາມຍິງນັ້ນວ່າ “ເຈົ້າມີເລື່ອງຫຍັງ” ນາງກາບທູນວ່າ
“ຂ້ານ້ອຍເປັນແມ່ໝ້າຍຢ່າງແທ້ຈິງ ຜົວຂ້ານ້ອຍໄດ້ຕາຍແລ້ວ [6]ຍິງຂ້າໃຊ້ຂອງພະອົງມີລູກຊາຍ
ສອງຄົນ ພວກເຂົາຜິດຖຽງກັນຢູ່ທີ່ງນາ ບໍ່ມີໃຜຊ່ວຍຫ້າມພວກເຂົາ, ລູກຊາຍ ຄົນໜຶ່ງຈຶ່ງຕີອີກ
ຄົນໜຶ່ງໃຫ້ຕາຍ [7]ເບິ່ງແມ ຍາດພີ່ນ້ອງທັງຫລາຍໄດ້ລຸກຂຶ້ນຕໍ່ສູ້ຂ້າໃຊ້ຍິງຂອງພະອົງ ແລະພວກ
ເຂົາໄດ້ເວົ້າວ່າ ‘ຈົ່ງມອບຜູ້ທີ່ຂ້າ ອ້າຍຂອງລາວມາໃຫ້ພວກເຮົາ ເພື່ອພວກເຮົາຈະຂ້າລາວ ເພື່ອ
ແກ້ແຄ້ນແທນອ້າຍທີ່ລາວໄດ້ຂ້ານັ້ນ ແລະ ຈະໄດ້ຂ້າຜູ້ທີ່ຮັບມໍລະດົກດ້ວຍ’ ດັ່ງນັ້ນພວກເຂົາຈະ
ມອດຖ່ານໄຟຂອງຂ້ານ້ອຍທີ່ຍັງເຫລືອຢູ່ນັ້ນບໍ່ໃຫ້ຜົວຂອງຂ້ານ້ອຍມີຊື່ ຫລືມີເຊື້ອສາຍເຫລືອຢູ່
ເທິງແຜ່ນດິນໂລກເລີຍ.”
[8]ກະສັດຈຶ່ງສັ່ງແກ່ຍິງຄົນນັ້ນວ່າ “ໄປເຮືອນຂອງເຈົ້າສາ ເຮົາຈະສັ່ງການກ່ຽວກັບເລື່ອງຂອງ
ເຈົ້າ” [9]ຍິງຊາວ ເຕໂກອາ ໄດ້ກາບທູນກະສັດວ່າ “ຂ້າແດ່ກະສັດເຈົ້ານາຍຂອງຂ້ານ້ອຍ ຂໍໃຫ້
ຄວາມຊົ່ວຊ້າຕົກຢູ່ກັບ ຂ້ານ້ອຍ ແລະກັບເຊື້ອສາຍພໍ່ຂອງຂ້ານ້ອຍ ແຕ່ກະສັດແລະລາຊະບັນ-
ລັງຂອງພະອົງຢ່າໃຫ້ມີໂທດເລີຍ.”
[10]ກະສັດກ່າວວ່າ “ຖ້າມີຜູ້ໃດເວົ້າຫຍັງແກ່ເຈົ້າ ຈົ່ງພາລາວມາຫາເຮົາ ຄົນນັ້ນຈະບໍ່ແຕະຕ້ອງ
ເຈົ້າອີກເລີຍ” [11]ນາງກໍກາບທູນວ່າ “ຂ້າແດ່ພະອົງ ຂໍກະສັດຊົງລະນຶກເຖິງ **ພຣະຜູ້ເປັນເຈົ້າ**
**ພຣະເຈົ້າ** ຂອງພະອົງ ເພື່ອຜູ້ອາຄາດ ເລືອດຈະບໍ່ກໍ່ການອາຄາດຂ້າອີກຕໍ່ໄປ ຢ້ານວ່າພວກເຂົາ
ຈະໄດ້ທຳລາຍລູກຊາຍຂອງຂ້ານ້ອຍ” ພະອົງກ່າວວ່າ “**ພຣະຜູ້ເປັນເຈົ້າ** ຊົງພຣະຊົນຢູ່ແທ້ສັນໃດ
ເສັ້ນຜົມຂອງລູກຊາຍຂອງເຈົ້າຈັກເສັ້ນດຽວຈະບໍ່ຕົກລົງເຖິງດິນ.”
[12]ແລ້ວຍິງນັ້ນກາບທູນວ່າ “ຂ້າແດ່ພະອົງ ຂໍສາວໃຊ້ຂອງພະອົງກາບທູນອີກຈັກຄຳໜຶ່ງແກ່
ກະສັດເຈົ້ານາຍຂອງຂ້ານ້ອຍ” ພະອົງກ່າວວ່າ “ເວົ້າໄປ” [13]ຍິງນັ້ນຈຶ່ງກາບທູນວ່າ “ເຫດໃດ
ກະສັດຈຶ່ງຄິດຢ່າງນີ້ຕໍ່ສູ້ປະຊາຊົນຂອງ **ພຣະເຈົ້າ**? ແລະກະສັດກ່າວເຊັ່ນນີ້ ເໝືອນຄົນທີ່ຜິດ
ຍ້ອນຜູ້ທີ່ກະສັດໄດ້ຂັບໄລ່ນັ້ນໂດຍບໍ່ໃຫ້ກັບຄືນມາອີກ [14]ເພາະວ່າພວກເຮົາທຸກຄົນຈະຕ້ອງຕາຍ
ແລະເປັນເໝືອນນ້ຳທີ່ຖອກລົງດິນຊຶ່ງເກັບເອົາຄືນອີກບໍ່ໄດ້ ແຕ່ **ພຣະເຈົ້າ** ບໍ່ໄດ້ປະຫານຊີວິດເພິ່ນ
ແຕ່ພຣະອົງຊົງມີພະປະສົງບໍ່ໃຫ້ຜູ້ທີ່ຖືກເນລະເທດໄປນັ້ນ ຈະຕ້ອງບໍ່ຢູ່ຫ່າງໄກຈາກພະອົງຕໍ່ໄປ

[15]ທີ່ຂ້ານ້ອຍກາບທູນເລື່ອງນີ້ຕໍ່ກະສັດເຈົ້ານາຍຂອງຂ້ານ້ອຍ ເພາະປະຊາຊົນໄດ້ຂູ່ຂ້ານ້ອຍໃຫ້
ຢ້ານ ແລະສາວໃຊ້ຂອງພະອົງຄິດວ່າ 'ຂ້ານ້ອຍຈະກາບທູນກະສັດ ຫວັງວ່າ ກະສັດຈະໂຜດ
ຕາມຄຳຂໍຂອງຍິງຜູ້ຮັບໃຊ້ຂອງພະອົງ [16]ດ້ວຍວ່າກະສັດຈະຊົງຮັບຟັງ ແລະຊົງຊ່ວຍຍິງຜູ້ຮັບໃຊ້
ຂອງພະອົງໃຫ້ພົ້ນຈາກມືຂອງຜູ້ທີ່ຕັ້ງໃຈທຳລາຍຂ້າ ນ້ອຍ ແລະລູກຊາຍຂອງຂ້ານ້ອຍຈາກມໍ-
ລະດົກຂອງ ພຣະເຈົ້າ' [17]ແລະຂ້າໃຊ້ຍິງຂອງພະອົງກາບທູນວ່າ 'ຂໍໃຫ້ຖ້ອຍຄຳຂອງກະສັດເຈົ້າ
ນາຍຂອງຂ້ານ້ອຍເປັນສິ່ງທີ່ໃຫ້ຄວາມສຸກສະບາຍ' ເພາະກະສັດເຈົ້ານາຍຂອງຂ້ານ້ອຍປຽບ
ເໝືອນຜູ້ສົ່ງຂ່າວສະຫວັນອົງໜຶ່ງຂອງ ພຣະເຈົ້າ ໃນການທີ່ຈະສັງເກດໄດ້ຄວາມດີ ແລະຄວາມ
ຊົ່ວ ຂໍພຣະຜູ້ເປັນເຈົ້າພຣະເຈົ້າຂອງພະອົງຊົງສະຖິດຢູ່ກັບພະອົງເທີ້ນ."

[18]ແລ້ວກະສັດໄດ້ຕອບ ແລະບອກຍິງນັ້ນວ່າ "ຢ່າງສູ່ປິດບັງໃນສິ່ງທີ່ເຮົາຈະຖາມເຈົ້າເດີ້ ເຈົ້າ
ຢ່າໄດ້ປິດບັງເດີ້" ຜູ້ຍິງນັ້ນກາບທູນວ່າ "ຂໍເຊີນຜູ້ເປັນກະສັດເຈົ້ານາຍຂອງຂ້ານ້ອຍຈົ່ງກ່າວ
ເທີ້ນ" [19]ແລະກະສັດຈຶ່ງຖາມວ່າ "ໃນເລື່ອງທັງໝົດນີ້ມືຂອງ ໂຢອາບ ກ່ຽວຂ້ອງກັບເຈົ້າແມ່ນບໍ?"
ຍິງນັ້ນທູນຕອບວ່າ "ຂ້າແດ່ກະສັດ ເຈົ້ານາຍຂອງຂ້ານ້ອຍ ພຣະອົງຊົງພຣະຊົນຢູ່ແນ່ສັນໃດ ບໍ່
ມີໃຜຫລີບຫລີກຄຳສັ່ງຂອງກະສັດເຈົ້ານາຍ ຂອງຂ້ານ້ອຍໄປທາງຂວາ ຫລື ທາງຊ້າຍໄດ້ ໂຢ-
ອາບ ຜູ້ຮັບໃຊ້ຂອງພະອົງນັ້ນແຫລະໄດ້ບອກໃຫ້ຂ້ານ້ອຍກາບທູນ ແລະເປັນຜູ້ສອນຄຳກາບທູນ
ແກ່ຂ້ານ້ອຍ ຂ້າໃຊ້ຍິງຂອງພະອົງ [20]ໂຢອາບ ຜູ້ຮັບໃຊ້ຂອງພະອົງໄດ້ເຮັດເຊັ່ນນີ້ກໍເພື່ອຈະປ່ຽນ
ໂສມໜ້າຂອງເຫດການນັ້ນ ແຕ່ເຈົ້ານາຍຂອງ ຂ້ານ້ອຍຊົງມີພະສະຕິປັນຍາຄືກັບສະຕິປັນຍາ
ຂອງທູດສະຫວັນອົງໜຶ່ງຂອງ ພຣະເຈົ້າ ຊົງຮູ້ທຸກສິ່ງທຸກຢ່າງທີ່ບັງເກີດຂຶ້ນເທິງແຜ່ນດິນໂລກ."

## ອັບຊາໂລມໄດ້ຮັບການຍົກໂທດ

[21]ກະສັດໄດ້ສັ່ງ ໂຢອາບ ວ່າ "ເບິ່ງແມ ເຮົາໄດ້ເຮັດຕາມຄຳຂໍນີ້ແລ້ວ ຈົ່ງໄປນຳເອົາອັບຊາ-
ໂລມ ຊາຍໜຸ່ມຄົນນັ້ນ ກັບມາ" [22]ໂຢອາບ ກໍກົ້ມໜ້າຂາບລົງດິນ ແລ້ວຂອບພະຄຸນກະສັດ ໂຢ-
ອາບ ກາບທູນວ່າ "ຂ້າແດ່ກະສັດເຈົ້ານາຍຂອງຂ້ານ້ອຍມື້ນີ້ຜູ້ຮັບໃຊ້ຂອງພະອົງຮູ້ວ່າ ຂ້າຂ້ອຍ
ໄດ້ຮັບພະກະລຸນາໃນສາຍພະເນດຂອງພະອົງທີ່ກະສັດໄດ້ປະຕິບັດ ຕາມຄຳທູນຂໍຂອງ ຜູ້ຮັບ
ໃຊ້ຂອງພະອົງ."

[23]ດັ່ງນັ້ນ ໂຢອາບ ຈຶ່ງໄປເມືອງ ເກຊູ ແລະພາອັບຊາໂລມ ໄປເມືອງ ເຢຣູຊາເລັມ [24]ແລະກະ-
ສັດຮັບສັ່ງວ່າ "ໃຫ້ລາວໄປຢູ່ວັງຂອງລາວສາ ຢ່າໃຫ້ເຂົ້າເຝົ້າເຮົາ" ອັບຊາໂລມ ກໍໄປຢູ່ວັງຂອງ
ເພິ່ນ ບໍ່ໄດ້ເຂົ້າເຝົ້າຕໍ່ພະພັກກະສັດ.

## ອັບຊາໂລມເຂົ້າເຝົ້າດາວິດ

[25]ໃນບັນດາ ອິສຣາເອນ ບໍ່ມີຜູ້ໃດ ໄດ້ຮັບຄຳຍ້ອງຍໍ ແລະຮູບຮ່າງງາມ ເທົ່າກັບ ອັບຊາໂລມ
ຕັ້ງແຕ່ຝ່າຕີນຈົນຮອດຫົວ ໂດຍບໍ່ມີຕຳໜິເລີຍ [26]ອັນໜຶ່ງ ເພິ່ນໄດ້ຕັດຜົມປີລະເທື່ອຍ້ອນຜົມໜັກ
ນ້ຳໜັກຂອງຜົມນັ້ນໄດ້ສອງຮ້ອຍ ເຊເຂ ຕາມຊົງຂອງກະສັດ [27]ອັບຊາໂລມ ມີລູກຊາຍສາມຄົນ
ແລະລູກສາວຄົນໜຶ່ງຊື່ ຕາມາ ນາງເປັນຍິງທີ່ສວຍງາມ.

[28]ອັບຊາໂລມ ປະທັບໃນເມືອງ ເຢຣູຊາເລັມ ໄດ້ສອງປີເຕັມ ໂດຍບໍ່ໄດ້ເຂົ້າເຝົ້າຕໍ່ພະພັກກະສັດ
[29]ແລ້ວ ອັບຊາໂລມ ກໍໃຫ້ໄປຕາມ ໂຢອາບ ຈະໃຊ້ໃຫ້ເຂົ້າໄປເຝົ້າກະສັດ ແຕ່ ໂຢອາບ ບໍ່ຍອມມາຫາ

ເພິ່ນ ເພິ່ນກໍໃຊ້ຄົນໄປເທື່ອທີ່ສອງແຕ່ໂຢອາບກໍບໍ່ມາອີກ 30ເພິ່ນຈຶ່ງສັ່ງຂ້າໃຊ້ຂອງຕົນວ່າ "ເບິ່ງ
ແມ, ນາຂອງໂຢອາບຢູ່ຖັດນາຂອງເຮົາ, ພວກເຂົາມີເຂົ້າບະເລ ຈົ່ງເອົາ ໄຟເຜົານານັ້ນເສຍ"
ຂ້າໃຊ້ຂອງອັບຊາໂລມກໍເອົາໄຟໄປເຜົານານັ້ນ.
31ໂຢອາບກໍລຸກຂຶ້ນໄປຫາອັບຊາໂລມທີ່ວັງຂອງເພິ່ນ ແລ້ວຖາມເພິ່ນວ່າ "ເປັນຫຍັງຂ້າໃຊ້
ຂອງທ່ານຈຶ່ງເອົາໄຟໄປເຜົານາຂອງຂ້ານ້ອຍ" 32ອັບຊາໂລມຕອບໂຢອາບວ່າ "ເຮົາສົ່ງຄົນໄປ
ບອກທ່ານວ່າ 'ມານີ້ ເຮົາຈະສົ່ງທ່ານໄປຫາກະສັດ ທູນວ່າ ເປັນຫຍັງຈຶ່ງໃຫ້ຂ້າພະອົງອອກມາ
ຈາກເກຊູ ຖ້າຢູ່ບ່ອນນັ້ນກໍດີກວ່າ" ບັດນີ້ ຂໍໃຫ້ເຮົາໄດ້ເຂົ້າເຝົ້າຕໍ່ພະພັກກະສັດ ຖ້າເຮົາມີຄວາມ
ຊົ່ວຊ້າປະການໃດ ກໍຂໍພະອົງຊົງປະຫານເຮົາສາ.'"
33ໂຢອາບຈຶ່ງເຂົ້າໄປເຝົ້າກະສັດກາບທູນພະອົງ, ພະອົງກໍຊົງເອີ້ນອັບຊາໂລມ ເພິ່ນຈຶ່ງເຂົ້າ
ໄປເຝົ້າກະສັດນ້ອມກາຍລົງດິນຕໍ່ພະພັກກະສັດ ກະສັດກໍຊົງຈູບອັບຊາໂລມ.

# ບົດທີ 15

## ການກະບົດຂອງອັບຊາໂລມ

1ຕໍ່ມາ ອັບຊາໂລມໄດ້ຈ້າງເອົາລົດຮົບ ແລະຝູງມ້າພ້ອມທັງທະຫານຫ້າສິບຄົນແຫ່ຕົນອອກ
ໄປ. 2ອັບຊາໂລມລຸກແຕ່ເດິກ ແລະອອກໄປຢືນຢູ່ປະຕູກຳແພງເມືອງໃກ້ຫົນທາງ ເວລາໃດທີ່
ເຫັນຄົນມີເລື່ອງຜິດຖຽງກັນຜ່ານມາທາງນັ້ນ ເພື່ອຈະໄປຫາເຈົ້າຊີວິດຕັດສິນຄວາມໃຫ້ ອັບຊາ-
ໂລມກໍເອີ້ນມາຫາ ແລະຖາມວ່າ ເຈົ້າມາແຕ່ໃສ? ຖ້າຜູ້ນັ້ນຕອບວ່າ ມາຈາກຕະກູນນີ້ ຫລືຕະ-
ກູນນັ້ນໃນອິສຣາເອນ. 3ອັບຊາໂລມກໍເວົ້າໂລດວ່າ, "ເຈົ້າເປັນຝ່າຍຖືກຕ້ອງຕາມກົດໝາຍແລ້ວ
ແຕ່ວ່າ ບໍ່ມີໃຜຈະເປັນຜູ້ຕາງໜ້າເຈົ້າຊີວິດຟັງເລື່ອງຄະດີຂອງເຈົ້າດອກ." 4ລາວເວົ້າຕໍ່ໄປວ່າ,
"ຖ້າວ່າ ຂ້ອຍໄດ້ເປັນຜູ້ຕັດສິນຄວາມ ຄັນມີຜູ້ໃດຜູ້ໜຶ່ງມີເລື່ອງຜິດຖຽງກັນ ຫລືມີຄຳຮ້ອງທຸກມາ
ຫາຂ້ອຍ ຂ້ອຍກໍຈະໃຫ້ຄວາມຍຸດຕິທຳແກ່ລາວ."
5ເມື່ອມີຄົນເຂົ້າມາກົ້ມຂາບໃສ່ອັບຊາໂລມ ອັບຊາໂລມກໍອອກໄປຈັບມື ແລະກອດດ້ວຍ
ຄວາມດີໃຈ. 6ລາວເຮັດດັ່ງນີ້ກັບຊາວອິສຣາເອນທຸກຄົນທີ່ມາຫາເຈົ້າຊີວິດຕັດສິນຄວາມໃຫ້
ແລະລາວກໍເອົາອົກເອົາໃຈພວກເຂົາ.
7ຈາກນັ້ນມາໄດ້ສີ່ປີ ອັບຊາໂລມໄດ້ກາບທູນເຈົ້າຊີວິດວ່າ, "ຂ້າແດ່ສະເດັດພໍ່ ຂໍຊົງອະນຸຍາດ
ໃຫ້ຂ້ານ້ອຍໄປເມືອງເຮັບໂຣນແດ່ທ້ອນ ເພາະຂ້ານ້ອຍຢາກໄປແກ້ບະທີ່ໄດ້ສັນຍາໄວ້ກັບພຣະ-
ຜູ້ເປັນເຈົ້າ. 8ຄືຕອນທີ່ຂ້ານ້ອຍຢູ່ໃນເມືອງເກຊູ ທີ່ເຂດອາຣາມ ຂ້ານ້ອຍໄດ້ສັນຍາຕໍ່ພຣະຜູ້-
ເປັນເຈົ້າວ່າ ຄັນຖ້າພະອົງຊົງໃຫ້ຂ້ານ້ອຍກັບຄືນເມືອນະຄອນເຢຣູຊາເລັມ ຂ້ານ້ອຍຈະນະມັດ-
ສະການພະອົງທີ່ເມືອງເຮັບໂຣນ." 9ແລ້ວເຈົ້າຊີວິດກໍບອກວ່າ, "ຈົ່ງໄປດີເດີ້" ດັ່ງນັ້ນອັບຊາໂລມ
ກໍມຸ່ງໜ້າໄປເມືອງເຮັບໂຣນ.
10ແຕ່ວ່າໄດ້ໃຊ້ຜູ້ສົ່ງຂ່າວໄປບອກທຸກໆ ຕະກູນອິສຣາເອນວ່າ ຄັນຖ້າພວກເຂົາໄດ້ຍິນສຽງ
ແກໃຫ້ພາກັນເວົ້າວ່າ, "ອັບຊາໂລມໄດ້ເປັນເຈົ້າຊີວິດທີ່ເມືອງເຮັບໂຣນແລ້ວ." 11ອັບຊາໂລມໄດ້
ເຊີນເອົາຊາຍສອງຮ້ອຍຄົນຈາກນະຄອນເຢຣູຊາເລັມເດີນທາງຮ່ວມໄປນຳ ພວກເຫລົ່ານີ້ໄປ

ດ້ວຍຄວາມສັດຊື່ ໂດຍທີ່ບໍ່ຮູ້ຈັກກົນອຸບາຍແຕ່ຢ່າງໃດໝົດ. [12]ໃນເວລາທີ່ອັບຊາໂລມກຳລັງ
ຖວາຍເຄື່ອງບູຊາຢູ່ນັ້ນ ລາວໄດ້ສົ່ງຄົນໄປນຳເອົາອາຮີໂທເຟັນ ທີ່ປຶກສາຂອງກະສັດດາວິດທີ່
ເມືອງກີໂລ ແຜນການກະບົດຕໍ່ຕ້ານເຈົ້າຊີວິດກໍເພີ່ມທະວີຂຶ້ນ ພວກທີ່ຕິດຕາມອັບຊາໂລມກໍ
ເພີ່ມຈຳນວນຂຶ້ນເລື້ອຍໆ.

## ກະສັດດາວິດປົບໜີຈາກນະຄອນເຢຣູຊາເລັມ

[13]ຜູ້ນຳຂ່າວໄດ້ມາລາຍງານຕໍ່ດາວິດວ່າ, "ພວກອິສຣາເອນໄດ້ຕິດຕາມອັບຊາໂລມ ແລະ
ໄດ້ສະແດງຄວາມຈົ່ງຮັກພັກດີຕໍ່ລາວແລ້ວ." [14]ດາວິດຈຶ່ງເຕົ້າໂຮມພວກຂ້າລາຊະການ ທີ່ຢູ່ໃນ
ນະຄອນເຢຣູຊາເລັມ "ພວກເຂົາຕ້ອງພາກັນປົບໜີໄປດຽວນີ້ ອີກບໍ່ດົນລາວກໍຈະມາບ່ອນນີ້
ພວກເຮົາຈະເສຍໄຊໃຫ້ລາວ ແລະລາວຈະຂ້າທຸກໆ ຄົນໃນເມືອງນີ້." [15]ພວກເຂົາຕອບວ່າ,
"ຂ້າແດ່ພະອົງ ພວກຂ້ານ້ອຍພ້ອມທີ່ຈະເຮັດທຸກຢ່າງຕາມທີ່ພະອົງຊົງຮັບສັ່ງ."

[16]ແລ້ວກະສັດພ້ອມທັງທຸກຄົນໃນຄອບຄົວ ແລະພວກຂ້າລາຊະການກໍພາກັນໜີໄປ ເວັ້ນໄວ້
ແຕ່ພວກເມຍນ້ອຍສິບຄົນທີ່ພະອົງໄດ້ປະໄວ້ໃຫ້ເປັນຜູ້ເຝົ້າພະລາຊະວັງ. [17-18]ໃນເວລາໜີອອກ
ຈາກເມືອງນັ້ນ ເຈົ້າຊີວິດ ແລະພວກຂ້າລາຊະການຢຸດຢູ່ທີ່ເຮືອນຫລັງສຸດທ້າຍ ສ່ວນພວກເກ-
ເຣັດ ແລະພວກເປເລດ ໄດ້ເດີນທາງຜ່ານໜ້າພະອົງໄປ ແລະພວກທະຫານຫົກຮ້ອຍຄົນທີ່
ຕິດຕາມພະອົງມາຈາກເມືອງກາດກໍຍ່າງຜ່ານພະອົງໄປຄືກັນ.

[19]ເຈົ້າຊີວິດຈຶ່ງເວົ້າຕໍ່ອິດຕາຍ ຜູ້ນຳໜ້າທະຫານນັ້ນວ່າ "ເປັນຫຍັງ ເຈົ້າຈຶ່ງມາກັບພວກ
ຂ້ອຍ? ເຈົ້າກັບເມືອຢູ່ກັບກະສັດອົງໃໝ່ສາ ເຈົ້າເປັນຄົນຕ່າງດ້າວ ແລະເປັນຄົນອົບພະຍົບຈາກ
ບ້ານເກີດເມືອງນອນມາ. [20]ເຈົ້າໄດ້ອາໄສຢູ່ນີ້ພຽງຊົ່ວຄາວເທົ່ານັ້ນ ເປັນການສົມຄວນບໍ ທີ່ຂ້ອຍ
ຈະໃຫ້ເຈົ້າໄປມາກັບຂ້ອຍ? ຂ້ອຍເອງກໍບໍ່ຮູ້ວ່າຈະໄປທາງໃດດ້ວຍ ຂໍໃຫ້ພຣະຜູ້ເປັນເຈົ້າຊົງ
ກະລຸນາ ແລະເປັນທີ່ເພິ່ງຂອງພວກເຈົ້າສາ."

[21]ແຕ່ອິດຕາຍຕອບວ່າ, "ຂ້າແດ່ພະອົງ ຂ້ານ້ອຍຂໍສາບານໃນພຣະນາມພຣະຜູ້ເປັນເຈົ້າວ່າ
ຂ້ານ້ອຍຈະໄປກັບພະອົງຕະຫລອດທຸກທີ່ທຸກບ່ອນ ເຖິງແມ່ນວ່າຈະຕາຍກໍຕາມ." [22]ດາວິດຈຶ່ງ
ຕອບວ່າ, "ດີແລ້ວ ຈົ່ງເດີນທາງຕໍ່ໄປ" ແລ້ວອິດຕາຍພ້ອມທັງທະຫານ ແລະລູກເມຍຂອງພວກ
ເຂົາກໍພາກັນອອກເດີນທາງ.

[23]ໃນຂະນະທີ່ພວກຕິດຕາມດາວິດກຳລັງຍ່າງອອກນັ້ນ ພວກປະຊາຊົນໄດ້ຮ້ອງໄຫ້ດ້ວຍສຽງ
ດັງ ດາວິດພ້ອມທັງທະຫານກໍຂ້າມຫ້ວຍກິດໂຣນໄປ ພວກເຂົາໄດ້ມຸ່ງໜ້າໄປສູ່ຖິ່ນແຫ້ງແລ້ງ
ກັນດານ. [24]ສ່ວນປະໂລຫິດຊາໂດກ ພ້ອມທັງຄົນເລວີທີ່ຫາມຫີບຄຳສັນຍາອັນສັກສິດກໍຢູ່ນຳ
ເຈົ້າຊີວິດ ພວກເຂົາປົງຫີບນັ້ນໄວ້ຈົນປະຊາຊົນໄດ້ໜີຈາກເມືອງໄປໝົດ ອາບີອາທາກໍຢູ່ບ່ອນ
ນັ້ນຄືກັນ.

[25]ແລ້ວເຈົ້າຊີວິດໄດ້ເວົ້າກັບຊາໂດກວ່າ, "ຈົ່ງຫາມຫີບຄຳສັນຍາກັບຄືນເມືອເມືອງ ຖ້າວ່າ
ພຣະຜູ້ເປັນເຈົ້າຊົງພໍພຣະໄທກັບຂ້າພະເຈົ້າ ມື້ໜຶ່ງຂ້າງໜ້າ ພຣະອົງຈະຊົງໃຫ້ຂ້າພະເຈົ້າກັບ
ຄືນມາຫາບ່ອນຫີບນີ້ຢູ່ອີກ. [26]ແຕ່ຖ້າວ່າພຣະອົງບໍ່ຊົງພໍພຣະໄທກັບຂ້າພະເຈົ້າ ຂໍໃຫ້ພຣະອົງ
ກະທຳຕໍ່ຂ້າພະເຈົ້າຕາມພຣະປະສົງ."

[27]ແລ້ວ ດາວິດ ກໍເວົ້າກັບ ຊາໂດກ ຕໍ່ໄປວ່າ, "ຈົ່ງພາ ອາຮີມາອາດ ລູກຊາຍຂອງທ່ານ ແລະ ໂຢ-
ນາທານ ລູກຊາຍຂອງ ອາບີອາທາ ກັບຄືນເມືອງດ້ວຍຄວາມເປັນສຸກເທີ້ນ." [28]ໃນລະຫວ່າງນີ້
ຂ້າພະເຈົ້າຈະຄອຍຖ້າຢູ່ຖິ່ນແຫ້ງແລ້ງກັນດານໃກ້ບ່ອນຂ້າມແມ່ນໍ້າ ຈົນກວ່າຂ້າພະເຈົ້າຈະໄດ້
ຮັບຂ່າວຈາກທ່ານ." [29]ຊາໂດກ ແລະ ອາບີອາທາ ກໍນຳຫີບຄຳສັນຍາກັບຄືນເມືອນະຄອນ ເຢຣູ-
ຊາເລັມ ແລະພັກຢູ່ທີ່ນັ້ນ.

[30]ແລ້ວ ດາວິດ ກໍຂຶ້ນໄປຮ້ອງໄຫ້ຢູ່ເທິງພູໝາກກອກເທດ ພະອົງເອົາຜ້າຄຸມຫົວ ແລະປະຕີນ
ເປົ່າ ທຸກຄົນທີ່ຕິດຕາມພະອົງໄປກໍເອົາຜ້າຄຸມຫົວ ແລະຮ້ອງໄຫ້ຄືກັນ. [31]ຕໍ່ມາ ມີຄົນມາບອກ
ດາວິດ ວ່າ, "ອາຮີໂທເຟັນ ໄດ້ເຂົ້າຮ່ວມເປັນກະບົດກັບ ອັບຊາໂລມ ແລ້ວ ດາວິດ ຈຶ່ງອ້ອນວອນຕໍ່
ພຣະຜູ້ເປັນເຈົ້າວ່າ ຂ້າແດ່ພຣະຜູ້ເປັນເຈົ້າ ຂໍພຣະອົງຊົງເຮັດໃຫ້ຄຳປຶກສາຂອງ ອາຮີໂທເຟັນ
ເປັນໂມຄະ."

[32]ແລ້ວ ດາວິດ ໄດ້ຂຶ້ນໄປເທິງຍອດພູນ້ອຍ ຢູ່ທີ່ນັ້ນມີບ່ອນນະມັດສະການ ພະອົງໄດ້ພົບກັບ
ຮູຊາຍ ຊາວເມືອງ ອາຄີ ຊຶ່ງເປັນເພື່ອນທີ່ສັດຊື່ຂອງພະອົງ ລາວໄດ້ຈີກເສື້ອ ແລະເອົາຂີ້ດິນໃສ່
ຫົວ. [33]ດາວິດ ຈຶ່ງເວົ້າກັບລາວວ່າ, "ຖ້າວ່າເຈົ້າມາກັບຂ້ອຍກໍຈະຊ່ອຍຫຍັງຂ້ອຍບໍ່ໄດ້ດອກ.
[34]ແຕ່ວ່າເຈົ້າຈະຊ່ອຍຂ້ອຍໄດ້ແຕ່ຢ່າງດຽວ ໂດຍເຮັດໃຫ້ຄຳສະເໜີຂອງ ອາຮີໂທເຟັນ ຫລົມ-
ແຫລວໄປ ຄືໃຫ້ເຈົ້າກັບຄືນເມືອເມືອງ ແລະເວົ້າກັບ ອັບຊາໂລມ ດັ່ງນີ້ວ່າ, "ຂ້າແດ່ພະອົງ ບັດນີ້
ຂ້ານ້ອຍຈະຮັບໃຊ້ພະອົງດັ່ງທີ່ໄດ້ຮັບໃຊ້ສະເດັດພໍ່ຂອງພະອົງມາແລ້ວ." [35]ດາວິດ ໄດ້ບອກອີກ
ວ່າ ປະໂລຫິດ ຊາໂດກ ແລະ ອາບີອາທາ ກໍຢູ່ບ່ອນນັ້ນ ຖ້າວ່າເຈົ້າໄດ້ຍິນເລື່ອງພາຍໃນພະລາ-
ຊະວັງຂອງເຈົ້າຊີວິດ ຈົ່ງບອກພວກເຂົາໂລດ. [36]ພວກເຂົາມີລູກຊາຍຢູ່ນຳ ຄື ອາຮີມາອາດ
ແລະ ໂຢນາທານ ໃຫ້ເຈົ້າບອກພວກເຂົາທັງສອງນຳຂ່າວທັງໝົດທີ່ເຈົ້າຮັບໂຮມໄດ້ມາໃຫ້ຂ້ອຍ."
[37]ດັ່ງນັ້ນ ຮູຊາຍ ໝູ່ຂອງ ດາວິດ ກໍກັບຄືນເມືອເມືອງ ພໍດີກັບເວລາທີ່ ອັບຊາໂລມ ມາຮອດ.

# ບົດທີ 16

## ດາວິດ ແລະຊີບາ

[1]ເມື່ອ ດາວິດ ຍ່າງກາຍຍອດພູໄປໄດ້ໜ້ອຍໜຶ່ງ ໃນທັນໃດນັ້ນ ພະອົງກໍພົບກັບ ຊີບາ ຄົນໃຊ້
ຂອງ ເມຟີໂບເຊັດ ຊີບາ ມີລໍຄູ່ໜຶ່ງທີ່ບັນທຸກເຂົ້າຈີ່ສອງຮ້ອຍກ້ອນ ໝາກອະງຸ່ນແຫ້ງຮ້ອຍມັດ
ໝາກໄມ້ສົດຮ້ອຍມັດ ແລະຖົງນໍ້າອະງຸ່ນ.

[2]ກະສັດ ດາວິດ ຈຶ່ງຖາມວ່າ "ເຈົ້າຈະເອົາຂອງເຫລົ່ານີ້ໄປເຮັດຫຍັງ?" ຊີບາ ກໍຕອບວ່າ, "ລໍຄູ່
ນີ້ສຳລັບໃຫ້ຄົນໃນຄອບຄົວຂອງພະອົງຂີ່ ສ່ວນເຂົ້າຈີ່ ແລະໝາກໄມ້ເອົາໃຫ້ທະຫານຂອງພະອົງ
ແລະນໍ້າອະງຸ່ນນີ້ກໍໃຫ້ພວກທະຫານຄືກັນ ເວລາທີ່ພວກເຂົາອິດເມື່ອຍຢູ່ໃນຖິ່ນແຫ້ງແລ້ງກັນ-
ດານ." [3]ເຈົ້າຊີວິດໄດ້ຖາມອີກວ່າ, "ເມຟີໂບເຊັດ ຫລານຊາຍຂອງ ຊາອູນ ນາຍຂອງເຈົ້າຢູ່ໃສ?"
ຊີບາ ທູນຕອບວ່າ, "ເມຟີໂບເຊັດ ຍັງຢູ່ໃນນະຄອນ ເຢຣູຊາເລັມ ເພາະເພິ່ນເຊື່ອວ່າ ດຽວນີ້ພວກ
ອິສຣາເອນ ຈະມອບລາຊະອານາຈັກຂອງ ຊາອູນ ໃຫ້ເພິ່ນ ເພາະເພິ່ນເປັນຫລານຂອງ ຊາອູນ."
[4]ເຈົ້າຊີວິດຈຶ່ງເວົ້າຕໍ່ ຊີບາ ວ່າ, "ທຸກໆ ສິ່ງທີ່ໄດ້ເປັນຂອງ ເມຟີໂບເຊັດ ນັ້ນກໍເປັນຂອງເຈົ້າ." ຊີບາ

ທູນຕອບວ່າ, "ຂ້າແດ່ພະອົງ ຂ້ານ້ອຍເປັນຜູ້ຮັບໃຊ້ຂອງພະອົງ ຂໍພະອົງຈົ່ງປານີຂ້ານ້ອຍຕະ-
ຫລອດໄປເທີ້ນ."

## ດາວິດ ແລະຊີເມອີ

5ເມື່ອກະສັດ ດາວິດ ໄປຮອດເມືອງ ບາຮູຣິມ ຊີເມອີ ລູກຊາຍຂອງ ເກຣາຫລານຊາຍຂອງ ຊາ-
ອູນ ໄດ້ມາດ່າ ດາວິດ. 6ໃນຂະນະທີ່ ດາວິດ ຢູ່ທ່າມກາງພວກທະຫານ ແລະພວກອົງຄະລັກຂອງ
ພະອົງ ຊີເມອີ ໄດ້ແກວ່ງກ້ອນຫີນໄປໃສ່ພະອົງ ແລະໃສ່ບັນດາຂ້າລາຊະການຂອງພະອົງ. 7ຊີ-
ເມອີ ໄດ້ດ່າພະອົງວ່າ, "ຜູ້ຮ້າຍຂ້າຄົນ ອາດຊະຍາກອນຮ້າຍ ຈົ່ງໜີອອກໄປ. 8ເຈົ້າໄດ້ຍຶດເອົາ
ລາຊະອານາຈັກຂອງ ຊາອູນ ເຈົ້າໄດ້ຂ້າຫລາຍຄົນໃນຄອບຄົວ ຊາອູນ ພຣະຜູ້ເປັນເຈົ້າ ຊົງໃສ່
ໂທດເຈົ້າ ດຽວນີ້ ພຣະຜູ້ເປັນເຈົ້າ ໄດ້ຍົກລາຊະອານາຈັກໃຫ້ແກ່ ອັບຊາໂລມ ລູກຊາຍຂອງ ເຈົ້າ
ແລ້ວ ສ່ວນເຈົ້າເອງກໍຈະໄດ້ຮັບແຕ່ຄວາມຈິບຫາຍ ເພາະວ່າເຈົ້າເປັນຜູ້ຂ້າຄົນ."
9ແລ້ວ ອາບີຊາຍ ລູກຊາຍຂອງ ເຊຣູຢາ ກໍທູນຕໍ່ ດາວິດ ວ່າ, "ຂ້າແດ່ພະອົງ ເປັນຫຍັງພະອົງຈຶ່ງ
ປ່ອຍໃຫ້ໝາໂຕນີ້ດ່າພະອົງ ຂໍໂຜດອະນຸຍາດໃຫ້ຂ້ານ້ອຍອອກໄປຕັດຫົວຂອງມັນຢູ່ບ່ອນນັ້ນ
ເສຍ." 10ເຈົ້າຊີວິດ ເວົ້າຕໍ່ ອາບີຊາຍ ແລະ ໂຢອາບ ອ້າຍຂອງລາວວ່າ, "ເລື່ອງນີ້ບໍ່ແມ່ນເລື່ອງ
ຂອງເຈົ້າ ຖ້າວ່າ ພຣະຜູ້ເປັນເຈົ້າ ຊົງອະນຸຍາດໃຫ້ລາວດ່າຂ້ອຍ ໃຜຈະກ້າໄປຖາມລາວວ່າ ເປັນ
ຫຍັງ ເຈົ້າຈຶ່ງດ່າ?" 11ແລ້ວ ດາວິດ ກໍເວົ້າຕໍ່ ອາບີຊາຍ ແລະພວກຂ້າລາຊະການທຸກຄົນວ່າ ລູກ
ຊາຍຂອງຂ້ອຍ ເອງພະຍາຍາມຈະຂ້າຂ້ອຍຢູ່ ສະນັ້ນຈະປະຫລາດໃຈຫຍັງກັບຄົນ ເບັນຢາມິນ ຜູ້
ນີ້ ປ່ອຍໃຫ້ລາວດ່າຂ້ອຍຢູ່ຢ່າງນັ້ນແຫລະ ຢ່າໄປຫຍຸ້ງກ່ຽວກັບລາວ ເພາະ ພຣະຜູ້ເປັນເຈົ້າ ຊົງ
ໃຫ້ລາວ ເຮັດດັ່ງນັ້ນ. 12ບາງທີ ພຣະຜູ້ເປັນເຈົ້າ ຈະ ຊົງ ທອດພຣະເນດ ເຫັນ ຄວາມທຸກໃຈຂອງ
ຂ້ອຍ ແລະຈະຊົງປະທານພອນແກ່ຂ້ອຍແທນຄວາມດ່າຂອງລາວ."
13ແລ້ວ ດາວິດ ແລະທະຫານຂອງພະອົງກໍອອກເດີນທາງຕໍ່ໄປ ສ່ວນ ຊີເມອີ ກໍຍ່າງຕິດຕາມ
ໄປທາງຂ້າງພູນ້ອຍ ລາວຍ່າງທັງດ່າ ທັງແກວ່ງກ້ອນຫີນ ແລະຫວ່ານດິນໃສ່. 14ເມື່ອມາຮອດ
ແມ່ນ້ຳ ຢໍແດນ ເຈົ້າຊີວິດ ແລະພວກທະຫານຂອງພະອົງກໍອ່ອນເພຍຫລາຍ ຈຶ່ງໄດ້ພາກັນຢຸດ
ພັກຢູ່ບ່ອນນັ້ນ.

## ອັບຊາໂລມຢູ່ທີ່ນະຄອນເຢຣູຊາເລັມ

15ຕໍ່ມາ ອັບຊາໂລມ ກັບຊາວ ອິສຣາເອນ ພັກພວກຂອງລາວກໍເຂົ້າມານະຄອນ ເຢຣູຊາເລັມ
ສ່ວນ ອາຣີໂທເຟັນ ກໍຢູ່ກັບພວກ ເຂົາ. 16ເມື່ອ ຮູຊາຍ ເພື່ອນທີ່ສັດຊື່ຂອງ ດາວິດ ພົບ ອັບຊາໂລມ
ລາວກໍເວົ້າຂຶ້ນວ່າ, "ຂໍໃຫ້ພະລາຊາຈົ່ງຊົງພະຈະເລີນ ຂໍໃຫ້ພະລາຊາຈົ່ງຊົງພະຈະເລີນ."
17ອັບຊາໂລມ ກໍຖາມລາວວ່າ, "ເປັນຫຍັງເຈົ້າຈຶ່ງບໍ່ໄປກັບເພື່ອນຂອງເຈົ້າ ເຈົ້າສະແດງຄວາມ
ຈົ່ງຮັກພັກດີຕໍ່ລາວດ້ວຍຢ່າງນີ້ບໍ?" 18ຮູຊາຍ ໄດ້ຕອບວ່າ, "ຂ້ານ້ອຍຈະໄປໄດ້ຢ່າງໃດ? ຂ້າ-
ນ້ອຍ ເປັນຝ່າຍຂອງຜູ້ທີ່ ພຣະຜູ້ເປັນເຈົ້າ ຊົງ ເລືອກໄວ້ ເປັນຝ່າຍຂອງຜູ້ທີ່ປະຊາຊົນ ອິສຣາເອນ
ທຸກຄົນໄດ້ເລືອກໄວ້ ພວກຂ້ານ້ອຍຈະຢູ່ກັບພະອົງ. 19ອີກຢ່າງໜຶ່ງ ຖ້າຂ້ານ້ອຍບໍ່ຮັບໃຊ້ລູກ
ຊາຍນາຍຂອງຕົນແລ້ວ ຂ້ານ້ອຍຈະໄປຮັບໃຊ້ຜູ້ໃດ ຂ້ານ້ອຍໄດ້ຮັບໃຊ້ສະເດັດພໍ່ຂອງພະອົງ
ຢ່າງໃດ ຂ້ານ້ອຍກໍຈະຮັບໃຊ້ພະອົງຢ່າງນັ້ນ."

[20]ແລ້ວ ອັບຊາໂລມ ກໍຫັນໜ້າໄປເວົ້າກັບ ອາຮີໂທເຟັນ ວ່າ, "ຈົ່ງໃຫ້ຄຳແນະນຳແກ່ພວກເຮົາ
ແດ່ ວ່າພວກເຮົາຄວນຈະເຮັດຢ່າງໃດ?" [21]ອາຮີໂທເຟັນ ຈຶ່ງຕອບວ່າ, "ໃຫ້ພະອົງໄປສົມສູ່ຢູ່ກັບ
ພວກເມຍນ້ອຍສະເດັດພໍ່ຂອງພະອົງ ຊຶ່ງເພິ່ນໄດ້ປະໄວ້ໃຫ້ເປັນຜູ້ເຝົ້າພະລາຊະວັງນັ້ນ ແລ້ວທຸກ
ຄົນໃນ ອິສຣາເອນ ກໍຈະຮູ້ວ່າ ພະອົງກັບສະເດັດພໍ່ຂອງພະອົງເປັນສັດຕູກັນ ແລະພວກທີ່ຕິດ-
ຕາມພະອົງກໍຈະມີກຳລັງໃຈຫລາຍຂຶ້ນ." [22]ດັ່ງນັ້ນ ພວກເຂົາຈຶ່ງກາງຜ້າເຕັນຢູ່ຫລັງຄາພຽງພະ-
ລາຊະວັງໃຫ້ ອັບຊາໂລມ ແລະສາຍຕາຂອງທຸກຄົນກໍໄດ້ເຫັນ ອັບຊາໂລມ ເຂົ້າໄປສົມສູ່ຢູ່ຮ່ວມ
ກັບເມຍນ້ອຍຂອງພໍ່.

[23]ໃນເວລານັ້ນ ທຸກໆ ຄົນເຮັດຕາມຄຳແນະນຳຂອງ ອາຮີໂທເຟັນ ເໝືອນເປັນຄຳເວົ້າຂອງ
ພຣະເຈົ້າ ດາວິດ ແລະ ອັບຊາໂລມ ກໍເຮັດຕາມຄຳແນະນຳນີ້ຄືກັນ.

# ບົດທີ 17

[1]ຕໍ່ມາ ອາຮີໂທເຟັນ ໄດ້ເວົ້າກັບ ອັບຊາໂລມ ວ່າ, "ຂໍໂຜດອະນຸຍາດໃຫ້ຂ້ານ້ອຍເລືອກເອົາ
ທະຫານສິບສອງພັນຄົນ ແລ້ວໃນແລງມື້ນີ້ຂ້ານ້ອຍຈະອອກໄປຕິດຕາມຫາກະສັດ ດາວິດ. [2]ຂ້າ-
ນ້ອຍຈະໄປຕໍ່ສູ້ໃນຂະນະທີ່ ດາວິດ ກຳລັງເມື່ອຍ ແລະທໍ້ຖອຍກຳລັງໃຈ ພະອົງຈະຕື່ນຕົກໃຈ
ແລະພວກທະຫານຂອງພະອົງກໍຈະພາກັນປົບໜີໄປ ແລ້ວຂ້ານ້ອຍກໍຈະຂ້າແຕ່ ດາວິດ ເທົ່ານັ້ນ.
[3]ຂ້ານ້ອຍຈະນຳເອົາປະຊາຊົນທັງໝົດຂອງກະສັດ ດາວິດ ມາຫາພະອົງ ເໝືອນດັ່ງເມຍກັບຄືນ
ມາຫາຜົວຂອງຕົນ ເພາະວ່າພະອົງຕ້ອງການຂ້າພຽງແຕ່ຄົນດຽວເທົ່ານັ້ນ ແຕ່ປະຊາຊົນທີ່ຍັງ
ເຫລືອຈະໄດ້ປອດໄພ."

[4]ຄຳສະເໜີນີ້ເປັນທີ່ພໍໃຈແກ່ ອັບຊາໂລມ ແລະພວກເຈົ້ານາຍ ອິສຣາເອນ ທຸກຄົນ. [5]ອັບຊາ-
ໂລມ ຈຶ່ງເວົ້າວ່າ, "ບັດນີ້ ຈົ່ງໄປເອີ້ນ ຮູຊາຍ ມາ ເພື່ອພວກເຮົາຈະໄດ້ຮູ້ວ່າ ລາວມີຄວາມເຫັນ
ຢ່າງໃດ." [6]ເມື່ອ ຮູຊາຍ ມາຮອດ ອັບຊາໂລມ ກໍເວົ້າຕໍ່ລາວວ່າ, "ນີ້ເປັນຄຳເຫັນຂອງ ອາຮີໂທເຟັນ
ທີ່ສະເໜີຕໍ່ພວກເຮົາ ພວກເຮົາຈະເຫັນດີກັບຄຳສະເໜີນີ້ບໍ? ຖ້າວ່າບໍ່ເຫັນດີ ຂໍໃຫ້ເຈົ້າບອກກັບ
ພວກເຮົາແດ່ ວ່າຈະເຮັດຢ່າງໃດ?"

[7]ຮູຊາຍ ຈຶ່ງຕອບວ່າ, "ຄຳແນະນຳທີ່ ອາຮີໂທເຟັນ ເວົ້າກັບພະອົງໃນເວລານີ້ບໍ່ຖືກຕ້ອງ. [8]ກະ-
ສັດກໍຊົງຮູ້ຢູ່ແລ້ວວ່າ ກະສັດ ດາວິດ ສະເດັດພໍ່ຂອງພະອົງ ກັບພວກພະອົງນັ້ນ ເປັນນັກຮົບທີ່
ເກັ່ງກ້າ ແລະໂຫດຮ້າຍເໝືອນໝີຢູ່ໃນປ່າທີ່ຖືກຄົນລັກເອົາລູກຂອງມັນໄປ ສະເດັດພໍ່ຂອງພະອົງ
ເປັນນັກຮົບທີ່ມີຄວາມຊຳນິຊຳນານ ເວລາກາງຄືນພະອົງຄົງຈະບໍ່ນອນຢູ່ບ່ອນດຽວກັບພວກທະ-
ຫານຂອງພະອົງດອກ. [9]ເຊື່ອແນ່ວ່າ ດຽວນີ້ກະສັດ ດາວິດ ຄົງຈະໄປລີ້ໃນຖໍ້າ ຫລືວ່າຢູ່ບ່ອນອື່ນ
ແລ້ວ ຖ້າຫາກວ່າກະສັດ ດາວິດ ມາຕໍ່ສູ້ໄດ້ມີຄົນຝ່າຍພະອົງລົ້ມຕາຍໃນສະໜາມຮົບ ຜູ້ໃດໄດ້ຍິນ
ເລື່ອງນີ້ກໍຈະເວົ້າວ່າ ທະຫານຂອງເຈົ້າ ອັບຊາໂລມ ເສຍໄຊ. [10]ແລ້ວຕໍ່ໄປ ເຖິງແມ່ນວ່າພວກ
ທະຫານທີ່ເກັ່ງກ້າເໝືອນດັ່ງໂຕສິງກໍຈະຢ້ານກົວ ເພາະທຸກຄົນໃນ ອິສຣາເອນ ຮູ້ແລ້ວວ່າ ສະ-
ເດັດພໍ່ຂອງພະອົງ ເປັນທະຫານຜູ້ຍິ່ງໃຫຍ່ ແລະພວກທະຫານຂອງພະອົງກໍເປັນນັກຮົບທີ່ເກັ່ງ
ກ້າ. [11]ຕາມຄຳເຫັນຂອງຂ້ານ້ອຍ ຢາກໃຫ້ພະອົງນຳເອົາພວກ ອິສຣາເອນ ທຸກຄົນທົ່ວທັງປະ-

ເຫດ ເຂົ້າມາໂຮມກັນໃຫ້ຫລາຍເໝືອນເມັດດິນຊາຍແຄມທະເລ ແລ້ວໃຫ້ພະອົງເປັນຜູ້ນຳພວກ
ເຂົາອອກສູ່ສະໜາມຮົບ. 12ຖ້າເຮັດດັ່ງນີ້ ພວກເຮົາກໍຈະພົບກະສັດ ດາວິດ ໄດ້ ບໍ່ວ່າເພິ່ນຈະຢູ່
ບ່ອນໃດ ແລະເຂົ້າໂຈມຕີກ່ອນທີ່ພະອົງຈະຮູ້ຕົວ ກະສັດ ດາວິດ ກັບພວກຂອງພະອົງຈະບໍ່ມີໃຜ
ລອດຊີວິດຢູ່ໄດ້. 13ຖ້າວ່າກະສັດ ດາວິດ ຖອຍເຂົ້າມາໃນເມືອງໃດ ທະຫານຂອງພວກເຮົາກໍຈະ
ໃຊ້ເຊືອກດຶງທຳລາຍເມືອງນັ້ນລົງ ໂດຍບໍ່ໃຫ້ເຫລືອແມ່ນແຕ່ຫີນກ້ອນດຽວ.”

14ອັບຊາໂລມ ແລະພວກ ອິສຣາເອນ ທຸກຄົນຈຶ່ງເວົ້າວ່າ, “ຄຳເຫັນຂອງ ຮູຊາຍ ນີ້ດີກວ່າຄຳ
ເຫັນຂອງ ອາຣີໂທເຟັນ” ພຣະຜູ້ເປັນເຈົ້າ ໄດ້ຊົງ ເຮັດໃຫ້ຄຳເຫັນຂອງ ອາຣີໂທເຟັນ ເປັນໂມຄະ
ເພື່ອວ່າໂຊກຮ້າຍຈະຕົກຖືກກັບ ອັບຊາໂລມ.

## ດາວິດໄດ້ຮັບຄຳເຕືອນ ແລະໜີໄປ

15ຕໍ່ມາ ຮູຊາຍ ໄດ້ນຳເອົາຄຳເຫັນທີ່ຕົນສະເໜີອັບຊາໂລມ ແລະພວກຜູ້ນຳອິສຣາເອນ ພ້ອມ
ທັງຄຳເຫັນຂອງ ອາຣີໂທເຟັນ ມາລາຍງານຕໍ່ປະໂລຫິດ ຊາໂດກ ກັບ ອາບີອາທາ. 16ຮູຊາຍ ໄດ້
ບອກຕື່ມອີກວ່າ, “ໃຫ້ສົ່ງຂ່າວໄປບອກກະສັດ ດາວິດ ໄວໆ ວ່າຢ່າໃຫ້ພະອົງພັກຄ້າງຄືນຢູ່ຖິ່ນ
ແຫ້ງແລ້ງກັນດານນັ້ນ ແຕ່ໃຫ້ພະອົງຂ້າມແມ່ນໍ້າຢໍແດນ ໄປໂລດ ເພື່ອວ່າພະອົງ ແລະພວກ
ຂອງພະອົງທຸກຄົນຈະບໍ່ຖືກຈັບແລະຖືກຂ້າ.”

17ຝ່າຍ ໂຢນາທານ ແລະ ອາຮີມາອາດ ກໍກຳລັງນັ່ງຄອຍຖ້າຢູ່ທີ່ ເອັນ-ໂຣເກນ ເພາະວ່າ
ພວກເຂົາບໍ່ກ້າສ່ຽງເຂົ້າໄປໃນເມືອງ ແຕ່ໄດ້ມີສາວໃຊ້ຜູ້ໜຶ່ງອອກມາລາຍງານເຫດການທີ່ເກີດຂຶ້ນ
ໃຫ້ແກ່ພວກເຂົາເປັນປະຈຳ ແລ້ວພວກເຂົາກໍນຳເອົາຂ່າວນັ້ນໄປບອກແກ່ກະສັດ ດາວິດ. 18ແຕ່
ໃນເທື່ອນີ້ມີເດັກນ້ອຍຜູ້ໜຶ່ງໄດ້ເຫັນພວກເຂົາ ແລະໄປບອກໃຫ້ອັບຊາໂລມ ດັ່ງນັ້ນ ໂຢນາທານ
ແລະ ອາຮີມາອາດ ຈຶ່ງຟ້າວໄປເຮືອນຊາຍຜູ້ໜຶ່ງທີ່ບ້ານ ບາຮູຣິມ ເຮືອນຂອງລາວຢູ່ໃກ້ນໍ້າສ້າງ
ພວກເຂົາທັງສອງຈຶ່ງລົງໄປໃນນໍ້າສ້າງນັ້ນ. 19ເມຍເຈົ້າຂອງເຮືອນໄດ້ເອົາຜ້າມາປູອັດປາກສ້າງ
ໄວ້ ແລະເອົາເມັດເຂົ້າຢາຍກະຈັດກະຈາຍໄວ້ເທິງນັ້ນ ເພື່ອບໍ່ໃຫ້ໃຜຈັບຜິດໄດ້.

20ພວກຂ້າລາຊະການຂອງ ອັບຊາໂລມ ໄດ້ມາຖາມຍິງໃນເຮືອນນັ້ນວ່າ, “ອາຮີມາອາດ
ແລະ ໂຢນາທານ ຢູ່ໃສ?” ລາວຈຶ່ງຕອບວ່າ, “ພວກເຂົາຂ້າມແມ່ນໍ້າໄປແລ້ວ” ເມື່ອພວກເຫລົ່ານີ້
ຊອກຫາພວກເຂົາທັງສອງບໍ່ພົບ ກໍພາກັນກັບຄືນເມືອນະຄອນ ເຢຣູຊາເລັມ.

21ຫລັງຈາກທີ່ພວກເຂົາກັບຄືນເມືອແລ້ວ ອາຮີມາອາດ ແລະ ໂຢນາທານ ກໍຂຶ້ນມາຈາກສ້າງ
ແລະໄປລາຍງານຕົວຕໍ່ກະສັດ ດາວິດ ພວກເຂົາໄດ້ລາຍງານແຜນການທຸກຢ່າງທີ່ ອາຣີໂທເຟັນ
ຈະຕໍ່ສູ້ພະອົງ ແລະໄດ້ບອກວ່າ, “ຂໍໃຫ້ຟ້າວຂ້າມແມ່ນໍ້າໄປ.” 22ດັ່ງນັ້ນ ດາວິດ ແລະພວກຂອງ
ພະອົງຈຶ່ງພາກັນຂ້າມແມ່ນໍ້າຢໍແດນ ເມື່ອຮອດມື້ເຊົ້າມາ ທຸກຄົນກໍຂ້າມໄປໝົດ.

23ເມື່ອ ອາຣີໂທເຟັນ ເຫັນວ່າ ຄຳສະເໜີຂອງຕົນບໍ່ເປັນຜົນສຳເລັດ ລາວກໍຂຶ້ນຂີ່ລໍກັບຄືນເມືອ
ບ້ານເມືອງຂອງຕົນ ເມື່ອຈັດແຈງເລື່ອງສ່ວນຕົວໄວ້ຮຽບຮ້ອຍແລ້ວ ລາວກໍຜູກຄໍຕາຍ ສົບຂອງ
ລາວໄດ້ເອົາໄປໄວ້ໃນອຸບໂມງປະຈຳຄອບຄົວ.

24ເມື່ອ ອັບຊາໂລມ ແລະທະຫານຂອງເພິ່ນ ຂ້າມແມ່ນໍ້າຢໍແດນມາ ດາວິດກໍໄປຮອດເມືອງ
ມາຮານາຢິມ ແລ້ວ. 25ອັບຊາໂລມ ໄດ້ໃຫ້ ອາມາສາ ເປັນຜູ້ບັນຊາການທະຫານ ແທນ ໂຢອາບ

ອາມາສາ ເປັນລູກຊາຍຂອງ ເຢເທ ຄົນ ອິສຣາເອນ ແມ່ຂອງລາວຊື່ວ່າ ອາບີການ ເປັນລູກສາວ
ຂອງ ນາຮາດ ແລະເປັນເອື້ອຍຂອງນາງ ເຊຣູຢາ ແມ່ຂອງ ໂຢອາບ. 26ອັບຊາໂລມ ແລະພວກ
ອິສຣາເອນ ໄດ້ຕັ້ງຄ້າຍພັກຢູ່ໃນແຂວງ ກີເລອາດ.

27ເມື່ອ ດາວິດ ມາຮອດເມືອງ ມາຮານາຢິມ ພະອົງກໍພົບກັບ ໂຊບີ ລູກຊາຍຂອງ ນາຮາດ ທີ່ມາ
ຈາກເມືອງ ຣັບບາ ເຂດ ອຳໂມນ ແລະໄດ້ພົບກັບ ມາກີ ລູກຊາຍຂອງ ອຳມີເອນ ທີ່ມາຈາກ ໂລເດ-
ບາ ທັງໄດ້ພົບກັບ ບາຊີລາຍ ທີ່ມາຈາກ ໂຣເກລີມ ເຂດ ກີເລອາດ. 28-29ພວກເຂົາເຫລົ່ານີ້ໄດ້ຖື
ເອົາຖ້ວຍໝໍ້ດິນ ບ່ອນຢູ່ ບ່ອນນອນ ແລະພວກເຂົາຍັງໄດ້ຖືເອົາອາຫານສຳລັບກະສັດ ດາວິດ
ແລະພວກຂອງພະອົງດ້ວຍ ເຊັ່ນ ເຂົ້າສາລີ ເຂົ້າເດືອຍ ແປ້ງເຂົ້າຂົ້ວ ໝາກຖົ່ວ ນ້ຳເຜິ້ງ ເນີຍ
ແຂງ ນ້ຳນົມຊຸ້ນ ແລະແກະ ເພາະພວກເຂົາຮູ້ວ່າ ດາວິດ ແລະພວກຂອງພະອົງຈະຕ້ອງຫິວ
ເຂົ້າຫິວນ້ຳ ແລະອິດເມື່ອຍໃນຖິ່ນແຫ້ງແລ້ງກັນດານ.

# ບົດທີ 18

## ອັບຊາໂລມເສຍໄຊ ແລະຖືກຂ້າ

1ຢູ່ຕໍ່ມາ ກະສັດ ດາວິດ ໄດ້ທ້ອນໂຮມເອົາທະຫານທັງໝົດຂອງພະອົງ ແລະໄດ້ມີຜູ້ບັງຄັບ
ບັນຊາກອງພັນແລະກອງຮ້ອຍ. 2ແລ້ວພະອົງກໍສົ່ງພວກເຂົາອອກໄປສາມກອງພົນ ຊຶ່ງແມ່ນ ໂຢ-
ອາບ ອາບີຊາຍ ອ້າຍຂອງ ໂຢອາບ ແລະ ອິດຕາຍ ທີ່ມາຈາກ ເມືອງ ກັດ ເປັນຜູ້ບັງຄັບບັນຊາ
ແລະເຈົ້າຊີວິດໄດ້ເວົ້າກັບທະຫານຂອງພະອົງວ່າ, “ເຮົາເອງກໍຈະໄປກັບພວກເຈົ້າ.”

3ພວກເຂົາຈຶ່ງຕອບວ່າ, “ຂໍພະອົງຢ່າໄປກັບພວກຂ້ານ້ອຍເລີຍ ຖ້າວ່າ ພວກຂ້ານ້ອຍທຸກຄົນ
ຖອຍໜີ ຫລືຖືກຂ້າເສຍເຄິ່ງໜຶ່ງ ມັນກໍບໍ່ສຳຄັນເທົ່າກັບເສຍພະອົງ ເພາະພະອົງມີຄ່າເໜືອກວ່າ
ພວກຂ້ານ້ອຍຕັ້ງສິບພັນຄົນ ສະນັ້ນ ຂໍພະອົງຈົ່ງປະທັບຢູ່ໃນເມືອງນີ້ ເພື່ອສົ່ງກອງໜູນອອກໄປ
ຊ່ອຍພວກຂ້ານ້ອຍ.”

4ເຈົ້າຊີວິດຈຶ່ງຕອບວ່າ, “ເຮົາຈະເຮັດທຸກສິ່ງທີ່ເຈົ້າຄິດວ່າດີ” ໃນຂະນະທີ່ພວກທະຫານຂອງ
ພະອົງຍ່າງອອກໄປເປັນໝວດລະພັນ ໝວດລະຮ້ອຍຄົນນັ້ນ ກະສັດ ດາວິດ ກໍຢືນຢູ່ຂ້າງກຳແພງ
ເມືອງ. 5ພະອົງໄດ້ຮ້ອງບອກ ໂຢອາບ ອາບີຊາຍ ແລະ ອິດຕາຍ ວ່າ, “ເພື່ອເຫັນແກ່ເຮົາ ຂໍຢ່າ
ທຳຮ້າຍຊາຍໜຸ່ມ ອັບຊາໂລມ ເດີ້” ກະສັດ ດາວິດ ໄດ້ໃຫ້ຄຳສັ່ງນີ້ແກ່ນາຍທະຫານທຸກຄົນ ພວກ
ທະຫານທຸກກົມກໍໄດ້ຍິນໝົດ.

6ກອງທັບ ດາວິດ ໄດ້ອອກໄປໂຈມຕີພວກ ອິສຣາເອນ ທີ່ນອກເມືອງ ແລະໄດ້ຕໍ່ສູ້ພວກເຂົາຢູ່
ໃນປ່າ ເອຟຣາຢິມ. 7ຝ່າຍພວກ ອິສຣາເອນ ກໍເສຍໄຊໃຫ້ແກ່ພວກທະຫານຂອງ ດາວິດ ມີທະ-
ຫານຊາວພັນຄົນຖືກຂ້າໃນມື້ນັ້ນ ມັນເປັນການພ່າຍແພ້ທີ່ເຈັບແສບທີ່ສຸດ. 8ການສູ້ຮົບໄດ້ກະ-
ຈາຍໄປ ທົ່ວທຸກບ່ອນມີທະຫານຕາຍຢູ່ໃນກາງປ່າ ຫລາຍກວ່າຖືກຂ້າຢູ່ໃນສະໜາມຮົບ.

9ອັບຊາໂລມ ໄດ້ພົບກັບທະຫານບາງຄົນຂອງ ດາວິດ ໂດຍບັງເອີນ ເມື່ອ ອັບຊາໂລມ ຂີ່ລໍຢູ່ ລໍ
ໄດ້ແລ່ນເຂົ້າໄປກ້ອງຕົ້ນກໍ່ໃຫຍ່ ຫົວຂອງ ອັບຊາໂລມ ໄດ້ຄາຢູ່ໃນງ່າໄມ້ ສ່ວນລໍກໍແລ່ນໜີໄປ
ອັບຊາໂລມ ຈຶ່ງແຂວນຢູ່ເທິງຕົ້ນໄມ້.

[10]ທະຫານຄົນໜຶ່ງຂອງ ດາວິດ ໄດ້ມາເຫັນພະອົງ ຈຶ່ງໄປລາຍງານຕໍ່ ໂຢອາບ ວ່າ, "ທ່ານ ຂ້າ-
ນ້ອຍ ໄດ້ ເຫັນ ອັບຊາໂລມ ກໍາລັງຄາຢູ່ຕົ້ນກໍ່." [11]ໂຢອາບ ຕອບວ່າ, "ເຈົ້າໄດ້ເຫັນລາວ ແທ້ບໍ?
ເປັນຫຍັງ ເຈົ້າຈຶ່ງບໍ່ຂ້າລາວຢູ່ໃນບ່ອນນັ້ນ ໂລດ? ແລ້ວຂ້ອຍ ເອງຈະ ເອົາ ເງິນສິບຫລຽນ ແລະ
ສາຍແອວໃຫ້ເຈົ້າ.

[12]ແຕ່ທະຫານຜູ້ນັ້ນຕອບວ່າ, "ເຖິງແມ່ນວ່າທ່ານຈະເອົາເງິນໃຫ້ຂ້ານ້ອຍພັນຫລຽນ ຂ້ານ້ອຍ
ກໍບໍ່ຍອມຍົກນິ້ວມືໄປຖືກຕົວພະລາຊະກຸມມານ ເລີຍ ພວກຂ້ານ້ອຍທຸກຄົນ ໄດ້ຍິນ ເຈົ້າຊີວິດສັ່ງ
ທ່ານ ສັ່ງ ອາບີຊາຍ ແລະ ອິດຕາຍ ວ່າ, "ເພື່ອເຫັນແກ່ເຮົາ ຂໍຢ່າທໍາຮ້າຍຊາຍໜຸ່ມອັບຊາໂລມ
ເດີ້." [13]ແຕ່ວ່າ ຖ້າຂ້ານ້ອຍບໍ່ຟັງຄວາມ ແລະຂ້າອັບຊາໂລມ ແນ່ນອນທີ່ສຸດ ເຈົ້າຊີວິດຕ້ອງຮູ້
ເພາະວ່າພະອົງຊົງຮູ້ທຸກຢ່າງ ແລ້ວທ່ານຈະບໍ່ອາດປ້ອງກັນຂ້ານ້ອຍໄວ້ໄດ້."

[14]ໂຢອາບ ເວົ້າຂຶ້ນວ່າ, "ຂ້ອຍຈະບໍ່ຍອມເສຍເວລາເວົ້າກັບເຈົ້າດອກ" ໃນຂະນະທີ່ອັບຊາໂລມ
ຍັງມີຊີວິດ ແລະ ແຂວນຢູ່ຕົ້ນກໍ່ນັ້ນ ໂຢອາບ ກໍຖອດຫອກຂອງຕົນສາມດວງ ແທງໜ້າອົກຂອງ
ລາວ. [15]ແລະທະຫານຂອງ ໂຢອາບ ສິບຄົນກໍເຂົ້າໄປຂ້າອັບຊາໂລມ.

[16]ຕໍ່ມາ ໂຢອາບ ກໍເປົ່າແກໃຫ້ຢຸດຮົບ ຝ່າຍກອງທັບທີ່ໄດ້ໄລ່ຕິດຕາມພວກ ອິສຣາເອນ ໄດ້ກັບ
ຄືນມາ. [17]ພວກເຂົາໄດ້ຫາມເອົາສົບຂອງ ອັບຊາໂລມ ໂຍນຖິ້ມລົງຂຸມເລິກຢູ່ໃນປ່າ ແລະກອງ
ກ້ອນຫີນອັດທັບປາກຂຸມໄວ້ເປັນກອງ ໃຫຍ່ໆ ພວກ ອິສຣາເອນ ທັງໝົດຕ່າງຄົນກໍໜີເມືອເຮືອນ
ຂອງໃຜລາວ.

[18]ໃນເວລາທີ່ອັບຊະໂລມຍັງມີຊີວິດຢູ່ນັ້ນ ລາວໄດ້ສ້າງອະນຸສາວະລີສ່ວນຕົວໄວ້ທີ່ຮ່ອມພູພະ
ລາຊາ ເພາະລາວບໍ່ມີລູກຊາຍສືບໜໍ່ແທນແນວ ດັ່ງນັ້ນ ອັບຊາໂລມ ຈຶ່ງເອີ້ນຊື່ອະນຸສາວະລີນັ້ນ
ຕາມຊື່ຂອງຕົນວ່າ, "ອະນຸສາວະລີ ອັບຊາໂລມ" ສືບຕໍ່ກັນມາຈົນເທົ່າທຸກມື້ນີ້.

## ດາວິດໄດ້ຮັບຂ່າວວ່າອັບຊາໂລມຕາຍ

[19]ຢູ່ຕໍ່ມາ ອາຮີມາອາດ ລູກຊາຍຂອງ ຊາໂດກ ໄດ້ເວົ້າກັບ ໂຢອາບ ວ່າ, "ຂໍອະນຸຍາດໃຫ້ຂ້າ-
ນ້ອຍນໍາຂ່າວດີນັ້ນໄປທູນຕໍ່ເຈົ້າຊີວິດເດີ້ ເພາະ ພຣະຜູ້ເປັນເຈົ້າ ຊົງຊ່ອຍໃຫ້ພະອົງພົ້ນຈາກສັດຕູ
ຂອງພະອົງແລ້ວ." [20]ໂຢອາບ ຕອບວ່າ, "ບໍ່ໄດ້ດອກ ໃນມື້ນີ້ເຈົ້າບໍ່ຕ້ອງນໍາຂ່າວດີໃດໆ ໄປບອກ
ພະອົງ ມື້ໃໝ່ຈຶ່ງຄ່ອຍໄປ ສໍາລັບມື້ນີ້ບໍ່ຕ້ອງໄປບອກ ເພາະເປັນມື້ທີ່ລາຊະກຸມມານໄດ້ສິ້ນພະ
ຊົນ."

[21]ແລະ ໂຢອາບ ໄດ້ເວົ້າກັບຄົນ ກູເຊ ຜູ້ເປັນທາດຂອງຕົນວ່າ, "ຈົ່ງໄປກາບທູນພະລາຊາຕາມທີ່
ເຈົ້າໄດ້ເຫັນ" ທາດຄົນນັ້ນກໍກາບລົງຄໍານັບ ແລ້ວແລ່ນໄປ. [22]ສ່ວນ ອາຮີມາອາດ ກໍຢືນຢັນແບບ
ເກົ່າວ່າ, "ຂ້ານ້ອຍບໍ່ຢ້ານດອກ ຂໍອະນຸຍາດໃຫ້ຂ້ານ້ອຍນໍາຂ່າວດີນີ້ໄປກາບທູນ ເໝືອນກັນ"
ໂຢອາບ ຈຶ່ງຖາມຂຶ້ນວ່າ, "ລູກເອີຍ ເປັນຫຍັງ ເຈົ້າຈຶ່ງຢາກໄປ ເພາະ ເຈົ້າຈະບໍ່ໄດ້ຮັບລາງວັນ
ຫຍັງໝົດໃນການໄປນີ້." [23]ອາຮີມາອາດ ເວົ້າຂຶ້ນວ່າ, "ມັນຈະເປັນຫຍັງກໍຢ່າ ຂ້ານ້ອຍຢາກໄປ."
ໂຢອາບ ກໍເວົ້າວ່າ, "ຈົ່ງໄປສາ" ແລ້ວ ອາຮີມາອາດ ກໍແລ່ນໄປທາງຮ່ອມຢໍແດນ ແລະຜ່ານກາຍ
ຄົນ ກູເຊ.

[24]ສ່ວນ ດາວິດ ກໍນັ່ງຢູ່ລະຫວ່າງປະຕູທັງສອງຂອງກໍາແພງ ເມືອງ ທະຫານຍາມກໍຢືນຢູ່ປ້ອມ

ຍາມເທິງກຳແພງ ເມື່ອທະຫານຫລຽວອອກໄປເຫັນຊາຍຄົນໜຶ່ງກຳລັງແລ່ນມາ ລາວກໍເອີ້ນລົງ
ມາບອກເຈົ້າຊີວິດ. 25ພະອົງຊົງກ່າວວ່າ, “ຖ້າແມ່ນລາວມາຄົນດຽວ ແມ່ນລາວກຳລັງນຳຂ່າວດີ
ມາໃຫ້” ຊາຍຜູ້ແລ່ນມານັ້ນກໍໃກ້ເຂົ້າມາທຸກໄລຍະ.
26ແລ້ວຄົນຍາມຜູ້ນັ້ນໄດ້ເຫັນຊາຍຜູ້ໜຶ່ງອີກ ກຳລັງແລ່ນມາຜູ້ດຽວ ລາວຈຶ່ງເອີ້ນໃສ່ຄົນເຝົ້າ
ປະຕູວ່າ, “ເບິ່ງແມ່ຫັ້ນ ມີຄົນອື່ນກຳລັງແລ່ນມາອີກ.” ເຈົ້າຊີວິດຕອບຂຶ້ນວ່າ, “ຜູ້ນີ້ກໍນຳຂ່າວດີ
ມາໃຫ້ຄືກັນ.” 27ຄົນຍາມເວົ້າຂຶ້ນວ່າ, “ຂ້ານ້ອຍເຫັນວ່າຜູ້ທີ່ແລ່ນມາກ່ອນຄືກັບອາຮີມາອາດ.”
ເຈົ້າຊີວິດກ່າວຂຶ້ນວ່າ “ລາວເປັນຄົນດີ ລາວກຳລັງນຳຂ່າວດີມາໃຫ້ເຮົາ.”
28ອາຮີມາອາດຮ້ອງກາບທູນເຈົ້າຊີວິດ ພ້ອມທັງກົ້ມກາບລົງຕໍ່ໜ້າພະອົງ ແລະເວົ້າວ່າ, “ຂໍ
ສັນລະເສີນພຣະຜູ້ເປັນເຈົ້າຂອງພະອົງ ຜູ້ຊົງໂຜດໃຫ້ພະອົງຊະນະພວກກະບົດ.”
29ເຈົ້າຊີວິດຈຶ່ງຖາມວ່າ, “ຊາຍໜຸ່ມອັບຊາໂລມສະບາຍດີບໍ?” ອາຮີມາອາດທູນຕອບວ່າ,
“ຂ້າແດ່ພະອົງ ເມື່ອໂຢອາບນາຍທະຫານຂອງພະອົງສົ່ງຂ້ານ້ອຍອອກໄປ ຂ້ານ້ອຍໄດ້ເຫັນ
ການແຕກຕື່ນຕົກໃຈຢ່າງຍິ່ງໃຫຍ່ ແຕ່ວ່າຂ້ານ້ອຍບໍ່ສາມາດບອກສາເຫດນີ້ໄດ້.” 30ເຈົ້າຊີວິດ
ບອກລາວວ່າ, “ຫຍັບເຂົ້າໄປຢືນຢູ່ຫັ້ນ” ລາວກໍຍ່າງກ້າວອອກໄປຢືນຢູ່ບ່ອນນັ້ນ.
31ຕໍ່ມາ ຄົນກູເຊກໍມາຮອດ ແລະທູນຕໍ່ເຈົ້າຊີວິດວ່າ, “ຂ້ານ້ອຍມີຂ່າວດີມາກາບທູນພະອົງ
ມື້ນີ້ ພຣະຜູ້ເປັນເຈົ້າຊົງໃຫ້ພະອົງພົ້ນຈາກພວກກະບົດທັງຫລາຍ.” 32ເຈົ້າຊີວິດຖາມຂຶ້ນວ່າ,
“ຊາຍໜຸ່ມອັບຊາໂລມສະບາຍດີບໍ?” ຄົນກູເຊກໍທູນຕອບວ່າ, “ຂ້າແດ່ພະອົງ ຂໍໃຫ້ເຫດການທີ່
ເກີດຂຶ້ນກັບອັບຊາໂລມ ຈົ່ງເກີດຂຶ້ນກັບສັດຕູທຸກຄົນຂອງພະອົງ ແລະກັບທຸກໆ ຄົນທີ່ກະບົດ
ຕໍ່ສູ້ພະອົງເທີ້ນ.”
33ເມື່ອໄດ້ຍິນດັ່ງນັ້ນ ເຈົ້າຊີວິດກໍໂສກເສົ້າເສຍໃຈ ພະອົງຂຶ້ນໄປຮ້ອງໄຫ້ຢູ່ຫ້ອງເທິງປະຕູກຳ-
ແພງເມືອງ ໃນເວລາຍ່າງຂຶ້ນໄປນັ້ນ ພະອົງກໍຮ້ອງໄຫ້ຈົ່ມວ່າ, “ໂທ ອັບຊາໂລມລູກຊາຍຂອງພໍ່
ຖ້າເປັນໄປໄດ້ພໍ່ຢາກຕາຍແທນລູກ ອັບຊາໂລມລູກຊາຍຂອງພໍ່ເອີຍ.”

# ບົດທີ 19

## ໂຢອາບຕິຕຽນດາວິດ

1ມີຄົນມາບອກໂຢອາບວ່າ, “ກະສັດດາວິດກຳລັງຮ້ອງໄຫ້ ແລະໄວ້ທຸກນຳອັບຊາໂລມ.”
2ເມື່ອພວກທະຫານໄດ້ຍິນວ່າເຈົ້າຊີວິດໄວ້ທຸກນຳລູກຊາຍຂອງພະອົງ ໄຊຊະນະໃນມື້ນັ້ນກໍກາຍ-
ເປັນຄວາມທຸກຂອງກອງທັບກະສັດດາວິດທັງໝົດ. 3ພວກເຂົາຈຶ່ງພາກັນກັບຄືນເມືອເມືອງດ້ວຍ
ຄວາມງຽບເຫງົາ ເໝືອນພວກທະຫານທີ່ເສຍໄຊໜີເສິກມາ. 4ສ່ວນເຈົ້າຊີວິດກໍເອົາ ຜ້າປົກໜ້າ
ຮ້ອງໄຫ້ສຽງດັງວ່າ, “ໂທ ລູກຊາຍຂອງພໍ່ເອີຍ ອັບຊາໂລມລູກຊາຍຂອງພໍ່.”
5ໂຢອາບໄດ້ເຂົ້າໄປໃນພະລາຊະວັງ ແລະທູນຕໍ່ເຈົ້າຊີວິດວ່າ, “ພວກທະຫານໄດ້ຊ່ອຍຊີວິດ
ພະອົງ ພ້ອມທັງລູກເມຍຂອງພະອົງໃຫ້ພົ້ນໄພ ແຕ່ມື້ນີ້ ພະອົງເຮັດໃຫ້ພວກເຂົາໄດ້ຮັບຄວາມ
ລະອາຍໃຈ. 6ພະອົງຊັງຜູ້ທີ່ຮັກພະອົງ ແລະຮັກຜູ້ທີ່ກຽດຊັງພະອົງ ພະອົງເຮັດຢ່າງນີ້ເປັນການ
ປະຈັກແຈ້ງວ່າ ພວກນາຍ ແລະພົນທະຫານຂອງພະອົງບໍ່ມີຄວາມສຳຄັນຢ່າງໃດໝົດຕໍ່ພະອົງ

ຂ້ານ້ອຍບໍ່ຮູ້ວ່າໃນມື້ນີ້ ຖ້າອັບຊາໂລມຍັງມີຊີວິດຢູ່ ແລະພວກຂ້ານ້ອຍທຸກຄົນຕາຍໄປ ພະອົງ
ຄົງດີໃຈຢູ່ບໍ່ໜ້ອຍ. [7]ດຽວນີ້ ຂໍເຊີນພະອົງສະເດັດໄປໃຫ້ຄວາມອົບອຸ່ນແກ່ທະຫານຂອງພະອົງ
ເທີ້ນ ຖ້າວ່າພະອົງບໍ່ໄປ ຂ້ານ້ອຍຂໍສາບານໃນພຣະນາມຂອງພຣະຜູ້ເປັນເຈົ້າວ່າ ໃນມື້ອື່ນເຊົ້າ
ຈະບໍ່ມີທະຫານຈັກຄົນຢູ່ນຳພະອົງ ມັນຈະເປັນໂຊກຮ້າຍທີ່ສຸດໃນຊີວິດທີ່ພະອົງເຄີຍປະສົບມາ.
[8]ແລ້ວເຈົ້າຊີວິດກໍໄປນັ່ງຢູ່ໃກ້ປະຕູເມືອງ ເມື່ອທະຫານຂອງພະອົງຮູ້ວ່າ ພະອົງຊົງປະທັບຢູ່
ບ່ອນນັ້ນ ພວກເຂົາກໍພາກັນມາຫຸ້ມຮອບພະອົງ.

## ດາວິດກັບຄືນເມືອນະຄອນເຢຣູຊາເລັມ

ໃນລະຫວ່າງນັ້ນ ພວກອິສຣາເອນໄດ້ແຕກໜີກັບເມືອເຮືອນຂອງໃຜລາວ. [9]ທຸກໆ ຕະກູນ
ໃນອິສຣາເອນໄດ້ຜິດຖຽງກັນ ແລະເວົ້າໃສ່ກັນ ແລະກັນວ່າ, “ກະສັດດາວິດໄດ້ຊ່ອຍພວກເຮົາ
ໃຫ້ພົ້ນຈາກສັດຕູ ແລະພົ້ນຈາກພວກຟີລິດສະຕິນ ແຕ່ດຽວນີ້ ພະອົງຊົງປົບໜີອອກຈາກປະ-
ເທດຍ້ອນອັບຊາໂລມ. [10]ພວກເຂົາໄດ້ເອົານ້ຳມັນທົດສົງອັບຊາໂລມ ໃຫ້ເປັນກະສັດ ແຕ່ດຽວນີ້
ອັບຊາໂລມກໍຖືກຂ້າໃນສະໜາມຮົບແລ້ວ ດັ່ງນັ້ນ ບໍ່ມີໃຜກ້າລອງໄປກາບທູນເຊີນເອົາກະສັດ
ດາວິດກັບຄືນມາບໍ?”
[11]ຕໍ່ມາ ເລື່ອງທີ່ພວກອິສຣາເອນໄດ້ເວົ້າກັນນັ້ນກໍເຖິງຫູດາວິດ ພະອົງຈຶ່ງສັ່ງໃຫ້ປະໂລຫິດ
ຊາໂດກ ກັບອາບີອາທາໄປຖາມພວກຜູ້ນຳຊາວຢູດາວ່າ, “ດ້ວຍເຫດໃດພວກທ່ານຈຶ່ງມານຳ
ເອົາເຈົ້າຊີວິດກັບເມືອນຳຫລັງໝູ່.” [12]ພວກທ່ານເປັນຍາດພີ່ນ້ອງຂອງເຮົາ ເປັນເນື້ອໜັງ ແລະ
ສາຍເລືອດຂອງເຮົາ ສະນັ້ນ ເປັນຫຍັງພວກທ່ານຈຶ່ງມານຳເອົາເຈົ້າຊີວິດກັບເມືອນຳຫລັງໝູ່.”
[13]ດາວິດຍັງສັ່ງຄົນໄປບອກອາມາສາຄືກັນວ່າ, “ເຈົ້າເປັນຍາດພີ່ນ້ອງຂອງເຮົາ ນັບແຕ່ນີ້ຕໍ່ໄປ
ຂ້ອຍຈະແຕ່ງຕັ້ງເປັນຜູ້ບັງຄັບບັນຊາກອງທັບແທນໂຢອາບ ຖ້າວ່າ ຂ້ອຍບໍ່ປະຕິບັດຕາມຄຳເວົ້າ
ຂໍພຣະເຈົ້າຊົງລົງໂທດຂ້ອຍເຖິງຕາຍໂລດ.”
[14]ຄຳເວົ້າຂອງດາວິດໄດ້ຊະນະຈິດໃຈຊາວຢູດາທັງໝົດ ພວກເຂົາກໍສົ່ງຄົນໄປທູນເຈົ້າຊີວິດ
ວ່າ, “ຂໍພະອົງຊົງສະເດັດກັບຄືນ ພ້ອມກັບບັນດາຂ້າລາຊະການຂອງພະອົງເທີ້ນ.”
[15]ຕາມເສັ້ນທາງທີ່ດາວິດກັບຄືນເມືອນັ້ນ ພະອົງໄດ້ພົບທະຫານຊາວຢູດາທີ່ແມ່ນ້ຳຢໍແດນ
ພວກທະຫານໄດ້ມາເມືອງກິນການ ເພື່ອຊ່ອຍເຫລືອເວລາທີ່ພະອົງຂ້າມແມ່ນ້ຳ. [16]ໃນເວລາ
ດຽວກັນນັ້ນ ຊິເມອີຄົນເບັນຢາມິນລູກຊາຍຂອງເກຣາທີ່ມາຈາກບາຣູຣິມ ກໍຟ້າວເຂົ້າມາພົບ
ກະສັດດາວິດ ທີ່ແມ່ນ້ຳຢໍແດນ ມີທະຫານພັນຄົນຈາກຕະກູນເບັນຢາມິນມານຳລາວ. [17]ຊີບາ
ຄົນໃຊ້ຊັ້ນຈຳຂອງຊາອູນພ້ອມທັງລູກຊາຍສິບຫ້າຄົນ ແລະຄົນໃຊ້ຂອງຊາອູນອີກຊາວຄົນກໍໄດ້
ມາຄືກັນ ພວກເຫລົ່ານີ້ມາຮອດແມ່ນ້ຳຢໍແດນກ່ອນກະສັດດາວິດ.
[18]ພວກເຂົາໄດ້ຂ້າມແມ່ນ້ຳຢໍແດນໄປຝັ່ງນັ້ນກ່ອນ ເພື່ອລໍຖ້າຊ່ອຍຄອບຄົວທັງໝົດຂອງກະ-
ສັດຂ້າມແມ່ນ້ຳ ແລະເຮັດທຸກສິ່ງຕາມຄຳປະສົງຂອງພະອົງ. ເມື່ອເຈົ້າຊີວິດກຳລັງຂ້າມແມ່ນ້ຳໄປ
ຊິເມອີກໍຂາບລົງຕໍ່ໜ້າພະອົງ. [19]ແລະເວົ້າວ່າ, “ຂ້າແດ່ພະອົງ ຂໍຊົງລືມຄວາມຜິດທີ່ຂ້ານ້ອຍໄດ້
ເຮັດໃນມື້ທີ່ພະອົງອອກຈາກນະຄອນເຢຣູຊາເລັມ ຂໍຢ່າໄດ້ຖືເອົາເລື່ອງນັ້ນຕໍ່ສູ້ຂ້ານ້ອຍ ແລະ
ຢ່າໄດ້ຄິດກ່ຽວກັບເລື່ອງນັ້ນເລີຍ. [20]ຂ້າແດ່ພະອົງ ຂ້ານ້ອຍຮູ້ດີວ່າຂ້ານ້ອຍເປັນຄົນຜິດ ດ້ວຍ

ຢ່າງນີ້ແຫລະ ຂ້ານ້ອຍຈຶ່ງເປັນຄົນທຳອິດຈາກຕະກູນໂຢເຊັບມາຮັບສະເດັດໃນມື້ນີ້.
21ອາບີຊາຍ ລູກຊາຍຂອງເຊຣູຢາກໍເວົ້າຂຶ້ນວ່າ, “ຊີເມອີສົມຄວນຕາຍ ເພາະວ່າລາວໄດ້ດ່າ
ຜູ້ທີ່ພຣະຜູ້ເປັນເຈົ້າ ຊົງເລືອກໄວ້ໃຫ້ເປັນເຈົ້າຊີວິດ.” 22ແຕ່ດາວິດໄດ້ເວົ້າກັບອາບີຊາຍ ແລະ
ໂຢອາບອ້າຍຂອງອາບີຊາຍວ່າ, “ແມ່ນໃຜຖາມຄວາມຄິດເຫັນຈາກພວກເຈົ້າ? ເຈົ້າກຳລັງຈະ
ເຮັດໃຫ້ຂ້ອຍຫຍຸ້ງຍາກອີກບໍ? ດຽວນີ້ ຂ້ອຍເປັນເຈົ້າຊີວິດໃນລາຊະອານາຈັກອິສຣາເອນ ແລະ
ມື້ນີ້ຈະບໍ່ມີຄົນອິສຣາເອນຜູ້ໃດຖືກຂ້າ.” 23ແລ້ວດາວິດກໍເວົ້າຕໍ່ຊີເມອີວ່າ, “ເຮົາຂໍສັນຍາກັບເຈົ້າ
ວ່າ ເຈົ້າຈະບໍ່ຖືກຂ້າ.”
24-25ຕໍ່ມາ ເມຟີໂບເຊັດ ຫລານຊາຍຊາອູນກໍລົງມາຈາກນະຄອນ ເຢຣູຊາເລັມເພື່ອມາຮັບ
ເຈົ້າຊີວິດ ນັບຕັ້ງແຕ່ເຈົ້າຊີວິດໜີອອກຈາກນະຄອນເຢຣູຊາເລັມ ເມຟີໂບເຊັດບໍ່ໄດ້ລ້າງຕີນ ບໍ່
ໄດ້ແຖໜວດ ບໍ່ໄດ້ຊັກເຄື່ອງນຸ່ງ ຈົນຮອດມື້ພະອົງກັບຄືນມາເຢຣູຊາເລັມດ້ວຍຄວາມມີໄຊ ເຈົ້າ
ຊີວິດຈຶ່ງຖາມລາວວ່າ, “ເມຟີໂບເຊັດ ເປັນຫຍັງຈຶ່ງບໍ່ໄປກັບຂ້ອຍ?”
26ລາວຈຶ່ງທູນຕອບວ່າ, “ຂ້າແດ່ພະອົງ ຂ້ານ້ອຍເປັນຄົນພິການ ຂ້ານ້ອຍໄດ້ບອກຄົນໃຊ້ໃສ່
ອານລໍໃຫ້ ເພື່ອວ່າຂ້ານ້ອຍຈະໄດ້ຂີ່ໄປກັບພະອົງ ແຕ່ຄົນໃຊ້ທໍລະຍົດຕໍ່ຂ້ານ້ອຍ. 27ມັນນຳເອົາ
ເລື່ອງຂອງຂ້ານ້ອຍທີ່ບໍ່ມີມູນຄວາມຈິງມາກາບທູນພະອົງ ແຕ່ພະອົງເປັນເໝືອນທູດຂອງພຣະ-
ເຈົ້າ ສະນັ້ນ ຈົ່ງເຮັດຕາມທີ່ພະອົງເຫັນວ່າຖືກຕ້ອງເທີ້ນ. 28ທຸກຄົນໃນຄອບຄົວພໍ່ຂອງຂ້ານ້ອຍ
ສົມຄວນແລ້ວທີ່ພະອົງຈະຂ້າຖິ້ມໝົດ ແຕ່ພະອົງພັດຊົງອະນຸຍາດໃຫ້ຂ້ານ້ອຍກິນເຂົ້າຮ່ວມໂຕະ
ກັບພະອົງ ຂ້ານ້ອຍບໍ່ມີສິດທີ່ຈະຂໍຄວາມກະລຸນາຢ່າງໃດຈາກພະອົງເລີຍ.”
29ເຈົ້າຊີວິດຈຶ່ງຕອບວ່າ, “ເຈົ້າບໍ່ຕ້ອງເວົ້າຫຍັງອີກເລີຍ ຂ້ອຍໄດ້ຕັດສິນໃຈໃຫ້ເຈົ້າກັບຊີບາ
ແບ່ງມໍລະດົກຂອງຊາອູນປັນກັນ. 30ເມຟີໂບເຊັດທູນຕອບວ່າ, “ຂໍໃຫ້ຕົກເປັນຂອງຊີບາໝົດສາ
ການທີ່ພະອົງກັບຄືນມາຢ່າງປອດໄພ ກໍພຽງພໍແລ້ວສຳລັບຂ້ານ້ອຍ.”
31ບາຊີລາຍຄົນກີເລອາດ ກໍໄດ້ເດີນທາງມາຈາກໂຣເກລີມ ເພື່ອສົ່ງເຈົ້າຊີວິດຂ້າມແມ່ນ້ຳຢໍ-
ແດນຄືກັນ. 32ບາຊີລາຍເປັນຄົນເຖົ້າຫລາຍ ອາຍຸໄດ້ແປດສິບປີແລ້ວ ລາວເປັນຄົນຮັ່ງມີ ເມື່ອ
ຄາວພະອົງພັກຢູ່ມາຮານາຢີມ ລາວກໍເປັນຜູ້ສົ່ງສະບຽງອາຫານໃຫ້ເຈົ້າຊີວິດ. 33ເຈົ້າຊີວິດໄດ້
ບອກກັບລາວວ່າ, “ເຈົ້າຈົ່ງມາຢູ່ນະຄອນເຢຣູຊາເລັມກັບຂ້ອຍ ຂ້ອຍຈະລ້ຽງດູເຈົ້າ.”
34ແຕ່ບາຊີລາຍທູນຕອບວ່າ, “ຂ້ານ້ອຍຈະມີຊີວິດຢູ່ຕໍ່ໄປອີກຈັກປີ ຂ້ານ້ອຍຈະໄປນະຄອນ
ເຢຣູຊາເລັມກັບພະອົງໄດ້ຢ່າງໃດ? 35ອາຍຸຂອງຂ້ານ້ອຍກໍແປດສິບປີແລ້ວ ຄົງບໍ່ມີສິ່ງໃດຈະ
ເຮັດໃຫ້ຂ້ານ້ອຍມີຄວາມສຸກໄດ້ອີກດອກ ເວລາຂ້ານ້ອຍກິນເຂົ້າ ຫລືດື່ມນ້ຳ ຂ້ານ້ອຍກໍບໍ່ຮູ້ຈັກ
ລົດຊາດຂອງມັນຊ້ຳ ຂ້ານ້ອຍຟັງສຽງຄົນຮ້ອງເພງກໍບໍ່ໄດ້ຍິນ ພະອົງຈະລຳບາກຍ້ອນຂ້ານ້ອຍ
ລ້າໆ. 36ຂ້ານ້ອຍບໍ່ສົມຄວນຮັບຣາງວັນອັນຍິ່ງໃຫຍ່ນີ້ ສະນັ້ນ ຂ້ານ້ອຍຈະໄປກັບພະອົງຮອດ
ແຕ່ຟາກພຸ້ນເທົ່ານັ້ນ. 37ຂໍໃຫ້ຂ້ານ້ອຍກັບເມືອຕາຍໃກ້ອຸບໂມງຄອບຄົວຂ້ານ້ອຍພຸ້ນເທີ້ນ ຜູ້ນີ້ ຄື
ກິມຮາມຂ້າໃຊ້ຂອງພະອົງ ຂໍພະອົງຮັບເອົາລາວໄປນຳ ແລະໃຊ້ລາວຕາມທີ່ພະອົງຊົງເຫັນດີ.”
38ເຈົ້າຊີວິດຕອບວ່າ, “ເຮົາຈະເອົາລາວໄປນຳ ແລະປະຕິບັດຕໍ່ລາວຕາມຄວາມຕ້ອງການ
ຂອງເຈົ້າ ເຮົາຈະປະຕິບັດຕາມທຸກສິ່ງຕາມທີ່ເຈົ້າຮ້ອງຂໍມາ.”

39ແລ້ວ ດາວິດ ພ້ອມທັງພວກຂອງພະອົງທຸກຄົນກໍຂ້າມແມ່ນ້ຳຢໍແດນ ໄປ ພະອົງໄດ້ຈູບ ບາຊີ-
ລາຍ ທັງອວຍພອນໃຫ້ລາວ ແລ້ວ ບາຊີລາຍ ກໍກັບຄືນເມືອ. 40ຫລັງຈາກ ດາວິດ ຂ້າມແມ່ນ້ຳ
ແລ້ວ ພະອົງກໍໄປເມືອງ ກິນການ ຊຶ່ງມີທະຫານ ຢູດາ ທຸກຄົນ ແລະທະຫານ ອິສຣາເອນ ເຄິ່ງ
ໜຶ່ງຕິດຕາມພຣະອົງໄປ ສ່ວນ ກິມຣາມ ກໍໄປກັບພະອົງດ້ວຍ.

41ຕໍ່ມາ ທະຫານ ອິສຣາເອນ ທຸກຄົນໄດ້ເຂົ້າກາບທູນເຈົ້າຊີວິດວ່າ, “ຂ້າແດ່ພະອົງ ເປັນຫຍັງ
ພີ່ນ້ອງຊາວ ຢູດາ ຈຶ່ງອອກມາຮັບ ເອົາພະອົງ ຄອບຄົວຂອງພະອົງ ແລະທະຫານຂອງພະອົງ
ຂ້າມແມ່ນ້ຳຢໍແດນກ່ອນ.”

42ທະຫານ ຢູດາ ຈຶ່ງຕອບວ່າ, “ພວກຂ້ອຍເຮັດຢ່າງນີ້ ເພາະວ່າພະອົງ ເປັນຕະກູນດຽວກັບ
ຂ້ອຍ ເປັນຫຍັງພວກເຈົ້າຈຶ່ງບໍ່ດີໃຈ ຫລືພວກເຈົ້າເຂົ້າໃຈວ່າ ພະອົງໄດ້ຈ່າຍຄ່າອາຫານການກິນ
ແລະ ເອົາສິ່ງໜຶ່ງສິ່ງ ໃດໃຫ້ພວກຂ້ອຍຊັ້ນບໍ?” 43ພວກ ອິສຣາເອນ ເວົ້າອີກວ່າ, “ເຖິງ ແມ່ນວ່າ
ກະສັດ ດາວິດ ເປັນຄົນຕະກູນດຽວກັນກັບພວກ ເຈົ້າ ພວກຂ້ອຍກໍມີສ່ວນໃນພະອົງຫລາຍກວ່າ
ພວກ ເຈົ້າ ເຖິງສິບ ເທົ່າ ເປັນຫຍັງພວກ ເຈົ້າຈຶ່ງໝິ່ນປະໝາດພວກຂ້ອຍ? ແມ່ນພວກຂ້ອຍ ເປັນ
ພວກທຳອິດທີ່ອອກປາກຢາກເອົາເຈົ້າຊີວິດກັບຄືນມາ.” ແຕ່ຄຳເວົ້າຂອງພວກຢູດາ ຮຸນແຮງກວ່າ
ຄຳເວົ້າຂອງພວກ ອິສຣາເອນ.

# ບົດທີ 20

## ການກະບົດຂອງເຊບາ

1ຢູ່ບ່ອນນັ້ນມີຄົນອັນທະພານຜູ່ໜຶ່ງຊື່ ເຊບາ ລູກຊາຍ ບິກຣີ ຄົນ ເບັນຢາມິນ ລາວໄດ້ເປົ່າແກ
ຂຶ້ນ ແລະກ່າວວ່າ “ພວກເຮົາບໍ່ມີສ່ວນໃນ ດາວິດ, ບໍ່ມີມໍລະດົກໃນລູກຂອງ ເຢຊີ, ໂອ້ ພວກອິ-
ສຣາເອນ ເອີຍ ໃຫ້ທຸກຄົນກັບໄປເຕັນຂອງຕົນເທີ້ນ.”

2ດັ່ງນັ້ນຊາຍ ອິສຣາເອນ ທັງໝົດຈຶ່ງ ແຍກຕົວຈາກ ດາວິດ ແລະໄດ້ຕິດຕາມ ເຊບາ ລູກຊາຍ ບິ-
ກຣີ ແຕ່ພວກຄົນ ຢູດາ ໄດ້ຕິດຕາມກະສັດ ຂອງພວກ ເຂົາຢ່າງໝັ້ນຄົງ ຈາກແມ່ນ້ຳ ຢໍແດນ ໄປ
ຮອດເມືອງ ເຢຣູຊາເລັມ.

3ດາວິດ ສະເດັດກັບພະລາຊະວັງຂອງຕົນທີ່ເມືອງ ເຢຣູຊາເລັມ ເມຍນ້ອຍສິບຄົນທີ່ພະອົງປະ
ໄວ້ໃຫ້ເຝົ້າຮັກສາພະລາຊະວັງນັ້ນ ກະສັດໄດ້ກັກໄວ້ຢູ່ໃນເຮືອນຫລັງໜຶ່ງ ແລະມີຜູ້ຮັກສາ ດາ-
ວິດ ໄດ້ລ້ຽງດູພວກເຂົາແຕ່ບໍ່ໄດ້ເຂົ້າໄປສົມຊູ່ພວກເຂົາ ນາງເຫລົ່ານັ້ນ ກໍຕ້ອງຖືກກັກໃຫ້ມີຊີວິດຢູ່
ຢ່າງແມ່ໝ້າຍຈົນຮອດມື້ຕາຍ.

## ໂຢອາບຂ້າອາມາສາ

4ກະສັດໄດ້ສັ່ງ ອາມາສາ ວ່າ “ຈົ່ງລະດົມຊາຍ ຢູດາ ທັງຫຼາຍມາ ໂຮມກັນໃນບ່ອນນີ້ພາຍໃນ
ສາມມື້ ແລະຕົວທ່ານກໍ ຈົ່ງມາທີ່ນີ້ຄືກັນ” 5ອາມາສາ ກໍອອກໄປລະດົມຄົນ ຢູດາ ເພື່ອມາທ້ອນ-
ໂຮມແຕ່ບໍ່ສຳເລັດຕາມມື້ກຳນົດທີ່ກະສັດໄດ້ກຳນົດໄວ້.

6ດາວິດ ກ່າວກັບ ອາບີຊາຍ ວ່າ “ດຽວນີ້ ເຊບາ ລູກ ບິກຣີ ຈະເຮັດອັນຕະລາຍແກ່ເຮົາຫຼາຍກວ່າ
ອັບຊາໂລມ ຈົ່ງນຳເອົາ ທະຫານຂອງເຈົ້ານາຍຂອງທ່ານໄລ່ຕິດຕາມລາວ ຢ້ານວ່າລາວຈະພົບ

ເມືອງທີ່ມີກຳແພງ ແລະລັກໜີຈາກເຮົາ” [7]ບັນດາຄົນຂອງ ໂຢອາບ ໄດ້ໄປນຳເພິ່ນພ້ອມທັງຄົນ
ເກເຣັດ, ຄົນ ເປເລດ ກັບທະຫານທີ່ກ້າຫານທັງໝົດ ພວກເຂົາໄດ້ອອກໄປຈາກເມືອງ ເຢຣູຊາ-
ເລັມ ເພື່ອໄລ່ຕາມ ເຊບາ ລູກຊາຍ ບິກຣີ.

[8]ເມື່ອພວກເຂົາມາຮອດຫີນກ້ອນໃຫຍ່ທີ່ຢູ່ໃນເມືອງ ກິເບໂອນ ອາມາສາກໍໄດ້ພົບພໍ້ກັບພວກ
ເຂົາ ຝ່າຍ ໂຢອາບ ນຸ່ງເຄື່ອງແຕ່ງກາຍທະຫານມີສາຍຮັດແອວຕິດດາບທີ່ຢູ່ໃນຝັກຄາດໄວ້ຢູ່ແອວ
ເມື່ອເພິ່ນຍ່າງເຂົ້າໄປໃກ້ ດາບໄດ້ຕົກລົງ.

[9]ໂຢອາບ ຈຶ່ງຖາມອາມາສາວ່າ “ອ້າຍເອີຍ ເຈົ້າສະບາຍດີບໍ?” ແລະ ໂຢອາບກໍເອົາມືຂວາຈັບ
ໜວດ ອາມາສາ ເພື່ອຈະຈູບລາວ [10]ແຕ່ອາມາສາບໍ່ໄດ້ສັງເກດເຫັນດາບຊຶ່ງຢູ່ໃນມືຂອງ ໂຢອາບ:
ໂຢອາບ ຈຶ່ງເອົາດາບແທງທ້ອງ ອາມາສາ ໄສ້ໂລ່ ລົງດິນ ແລ້ວອາມາສາກໍເສຍຊີວິດ ແລະບໍ່
ໄດ້ແທງເທື່ອທີ່ສອງອີກ. ແລ້ວ ໂຢອາບ ກັບ ອາບີຊາຍ ນ້ອງຊາຍກໍໄລ່ຕາມ ເຊບາ ລູກຊາຍ ບິກຣີ
ໄປ.

[11]ທະຫານໜຸ່ມຄົນໜຶ່ງຂອງ ໂຢອາບ ໄດ້ຢືນຢູ່ໃກ້ ອາມາສາ ແລະ ເວົ້າວ່າ “ຜູ້ໃດເຫັນດີກັບ
ຝ່າຍ ໂຢອາບ ແລະຜູ້ໃດຢູ່ຝ່າຍ ດາວິດ ໃຫ້ຜູ້ນັ້ນຕິດຕາມ ໂຢອາບ ໄປ” [12]ອາມາສາ ກໍນອນ
ເກືອກເລືອດຂອງຕົນຢູ່ກາງຫົນທາງ ເມື່ອຊາຍຄົນນັ້ນເຫັນປະຊາຊົນທັງຫລາຍຢຸດຢືນຢູ່ລາວ ກໍ
ເອົາຊາກສົບຂອງ ອາມາສາ ອອກຈາກຫົນທາງ ໄປຖິ້ມໄວ້ໃນທົ່ງນາ ແລະ ເອົາເສື້ອຜ້າປົກໄວ້,
ເພາະລາວເຫັນວ່າທຸກໆຄົນທີ່ມາຍັງຢືນຢູ່.

## ການກະບົດຂອງເຊບາໄດ້ພ່າຍແພ້ໄປ

[13]ເມື່ອ ເອົາສົບ ອາມາສາ ອອກຈາກຫົນທາງແລ້ວ ປະຊາຊົນທັງປວງກໍຕາມ ໂຢອາບ ໄປເພື່ອ
ຕິດຕາມ ເຊບາ ລູກຊາຍ ບິກຣີ.

[14]ເຊບາ ໄດ້ຜ່ານໄປທົ່ວທຸກໆຕະກູນ ອິສຣາເອນ ຈົນໄປຮອດ ເມືອງ ອາເບັນ-ເບັດ-ມາອະກາ
ແລະບັນດາຄົນ ເບຣີອາ ກໍມາຮວມກັນ ແລະໄດ້ຕິດຕາມໄປນຳເພິ່ນດ້ວຍ [15]ເມື່ອພວກເຂົາມາ
ຮອດ ກໍໄດ້ອ້ອມເມືອງ ອາເບັນ-ເບັດ-ມາອະກາ ນັ້ນໄວ້ ພວກເຂົາກອງດິນສູງຂຶ້ນພຽງຂອບກຳ-
ແພງ ເມືອງຄົນທັງຫລາຍທີ່ຢູ່ກັບ ໂຢອາບ ໄດ້ທຸບກຳແພງໃຫ້ພັງທະລາຍລົງ [16]ມີຍິງສະຫລາດ
ຄົນໜຶ່ງຮ້ອງອອກມາຈາກໃນເມືອງນັ້ນວ່າ “ຂໍເຊີນຟັງແດ່ ຂໍຟັງແດ່ຂໍບອກ ໂຢອາບ ໃຫ້ມາພີ້ຂ້ອຍ
ຢາກຈະເວົ້ານຳເພິ່ນ.”

[17]ໂຢອາບ ກໍຫຍັບເຂົ້າໄປໃກ້ຍິງນັ້ນ ແລະຍິງນັ້ນໄດ້ຖາມວ່າ “ທ່ານຄື ໂຢອາບ ບໍ?” ເພິ່ນຕອບ
ວ່າ “ແມ່ນແລ້ວ” ນາງຈຶ່ງຮຽນເພິ່ນວ່າ “ຂໍທ່ານຟັງຖ້ອຍຄຳຂອງສາວໃຊ້ຂອງທ່ານຈັກໜ້ອຍແດ່”
ເພິ່ນກໍຕອບວ່າ” ຂ້ອຍກຳລັງຟັງຢູ່ແລ້ວ” [18]ນາງເວົ້າວ່າ “ແຕ່ກ່ອນພວກເຂົາເຄີຍເວົ້າກັນວ່າ ‘ໃຫ້
ພວກເຂົາຂໍຄຳປຶກສາທີ່ ອາເບັນ ເທີ້ນ’ ແລ້ວພວກເຂົາກໍຕົກລົງກັນໄດ້. [19]ເຮົາເປັນເມືອງທີ່ຮັກ
ຄວາມສະຫງົບ ແລະສັດຊື່ໃນ ອິສຣາເອນ ທ່ານຫາຊ່ອງທີ່ຈະທຳລາຍ ເມືອງທີ່ເປັນເມືອງແມ່ໃນ
ອິສຣາເອນ ເປັນຫຍັງທ່ານຈຶ່ງຊອກຫາຍາກທຳລາຍມໍລະດົກຂອງ ພຣະຜູ້ເປັນເຈົ້າ.”

[20]ໂຢອາບ ຈຶ່ງຕອບວ່າ “ຊຶ່ງຂ້ອຍຈະບັງອາດທຳລາຍນັ້ນ ຂໍໃຫ້ຫ່າງໄກຈາກຂ້ອຍ ຂໍໃຫ້ຫ່າງ
ໄກເທີ້ນ [21]ເລື່ອງນີ້ບໍ່ເປັນຢ່າງນັ້ນ ແຕ່ມີຊາຍຄົນໜຶ່ງຈາກພູເຂົາ ເອຟຣາຢິມ ຊື່ ເຊບາ ລູກ ບິກຣີ

ໄດ້ຍົກມືຂອງລາວຂຶ້ນຕໍ່ສູ້ ກະສັດຄືຕໍ່ສູ້ ດາວິດ ຈົ່ງມອບລາວພຽງຄົນດຽວ ແລະ ຂ້ອຍຈະຖອຍ
ທັບກັບຈາກເມືອງນີ້" ຍິງນັ້ນຈຶ່ງຕອບ ໂຢອາບ ວ່າ "ເບິ່ງແມ ຂ້ອຍຈະໂຍນຫົວຊາຍຄົນນັ້ນຂ້າມ
ກຳແພງໄປໃຫ້ທ່ານ."
[22]ແລ້ວຍິງນັ້ນກໍໄປຫາປະຊາຊົນທັງຫລາຍດ້ວຍປັນຍາຂອງນາງ ພວກເຂົາໄດ້ຕັດຫົວຂອງ
ເຊບາ ລູກຊາຍ ບິກຣີ ໂຍນອອກມາໃຫ້ ໂຢອາບ ແລະເພິ່ນກໍໄດ້ເປົ່າແກ, ພວກເຂົາຕ່າງກໍແຍກ
ກັນໄປຈາກນະຄອນນັ້ນກັບໄປຄ້າຍພັກຂອງຕົນທຸກຄົນ ໂຢອາບ ກໍກັບໄປເຝົ້າກະສັດທີ່ເມືອງ ເຢ-
ຣູຊາເລັມ.
[23]ໂຢອາບ ເປັນຜູ້ບັງຄັບບັນຊາກອງທັບທັງໝົດໃນ ອິສຣາເອນ ແລະ ເບນາຢາ ລູກຊາຍ ເຢ-
ໂຮຍາດາ ເປັນຜູ້ບັງຄັບບັນຊາຄົນ ເກເຣັດ ແລະຄົນ ເປເລດ [24]ແລະ ອາໂດຣາມ ເປັນຜູ້ຄຸ້ມຄອງ
ຄົນງານໂຍທາ, ເຢໂຮຊາຟັດ ລູກຊາຍ ອາຮີລຸດ ເປັນເລຂາ [25]ເຊວາ ເປັນລາຊະເລຂາ, ຊາໂດກ
ກັບ ອາບີອາທາ ເປັນປະໂລຫິດ [26]ທ່ານ ອີຣາ ຄົນຢາອີ ເປັນປະໂລຫິດຂອງ ດາວິດ ດ້ວຍ.

# ບົດທີ 21

## ການອຶດຢາກອາຫານໃນໄລຍະເວລາສາມປີ ເພາະຊາອູນຂ້າຄົນກິເບໂອນ

[1]ໃນສະໄໝຂອງ ດາວິດ ເກີດການອຶດຢາກຢູ່ສາມປີ ທຸກໆປີ ແລະ ດາວິດ ອະທິຖານອ້ອນ-
ວອນຕໍ່ ພຣະຜູ້ເປັນເຈົ້າ ແລະ ພຣະຜູ້ເປັນເຈົ້າ ຊົງກ່າວວ່າ "ຍ້ອນ ຊາອູນ ແລະຄອບຄົວທີ່ມີ
ຄວາມຜິດໃນຖານະຂ້າຄົນ, ເພາະລາວໄດ້ຂ້າຄົນ ກິເບໂອນ."
[2]ກະສັດຈຶ່ງເອີ້ນຄົນ ກິເບໂອນ ມາແລ້ວເວົ້າກັບພວກເຂົາວ່າ (ຝ່າຍຄົນ ກິເບໂອນ ນັ້ນບໍ່ແມ່ນລູກ
ຫລານ ອິສຣາເອນ ແຕ່ເປັນຄົນ ອະໂມຣິດ ທີ່ຍັງເຫລືອຢູ່ ແລະພວກລູກຫລານ ອິສຣາເອນ ໄດ້ສັນ-
ຍາກັບພວກເຂົາດ້ວຍຄຳປະຕິຍານ ແຕ່ ຊາອູນ ຊອກຫາທີ່ຈະຂ້າພວກເຂົາ ເພາະຄວາມຮ້ອນໃຈ
ເພື່ອເຫັນແກ່ຄົນ ອິສຣາເອນ ແລະຄົນ ຢູດາ) [3]ດາວິດ ໄດ້ຖາມຊາວ ກິເບໂອນ ວ່າ "ເຮົາຈະເຮັດ
ສິ່ງໃດສຳລັບພວກທ່ານ, ແລະ ເຮົາຈະເອົາສິ່ງໃດໄຖ່ໂທດບາບໄດ້ ເພື່ອພວກທ່ານຈະໄດ້ອວຍ-
ພອນແກ່ມໍລະດົກຂອງ ພຣະຜູ້ເປັນເຈົ້າ."
[4]ຄົນ ກິເບໂອນ ທູນຕອບກະສັດ ດາວິດ ວ່າ "ພວກຂ້າພະອົງຈະບໍ່ຮັບເງິນ ຫລືທອງຈາກ ຊາ-
ອູນ ແລະຄອບຄົວຂອງ ເພິ່ນ ພ້ອມທັງພວກຂ້າພະອົງບໍ່ຈຳເປັນໃຫ້ພະອົງປະຫານຊີວິດຄົນ ອິ-
ສຣາເອນ ຄົນໜຶ່ງຄົນໃດ" ພຣະອົງຈຶ່ງກ່າວວ່າ "ແລ້ວພວກທ່ານຈະໃຫ້ເຮົາເຮັດຫຍັງ ແກ່ພວກ
ທ່ານ?" [5]ພວກເຂົາກາບທູນກະສັດວ່າ "ຊາຍຜູ້ທີ່ເຜົາຜານພວກຂ້ານ້ອຍ ແລະວາງແຜນທຳລາຍ
ພວກຂ້ານ້ອຍເພື່ອ ບໍ່ໃຫ້ພວກຂ້ານ້ອຍມີບ່ອນຢູ່ໃນ ເຂດແດນ ອິສຣາເອນ [6]ຂໍຊົງມອບລູກຊາຍ
ເຈັດຄົນຂອງເພິ່ນໃຫ້ແກ່ພວກຂ້າພະອົງ ເພື່ອພວກຂ້າພະອົງຈະໄດ້ແຂວນຄໍພວກເຂົາຕໍ່ພຣະພັກ
ພຣະຜູ້ເປັນເຈົ້າ ທີ່ ກິເບອາ ຂອງ ຊາອູນ ຜູ້ຊຶ່ງ ພຣະຜູ້ເປັນເຈົ້າ ເລືອກໄວ້" ແລະກະສັດກ່າວວ່າ
"ເຮົາຈະຈັດພວກເຂົາມາໃຫ້."
[7]ແຕ່ກະສັດບໍ່ໄດ້ມອບ ເມຟີໂບເຊັດ ລູກຊາຍຂອງ ໂຢນາທານ ລູກຊາຍຂອງ ຊາອູນ ຍ້ອນ
ຄຳປະຕິຍານລະຫວ່າງທັງສອງທີ່ສັນຍາໃນພຣະນາມ ພຣະຜູ້ເປັນເຈົ້າ ຄືລະຫວ່າງ ດາວິດ ກັບ

ໂຢນາທານ ລູກຊາຍຂອງ ຊາອູນ [8]ແຕ່ກະສັດນຳເອົາລູກຊາຍສອງຄົນຂອງນາງ ຣິດຊະປາ ລູກ
ສາວຂອງ ອາອີຢາ ຊຶ່ງບັງເກີດກັບ ຊາອູນ ຊື່ ອາໂມນີ ກັບ ເມຟີໂບເຊັດ ແລະລູກຊາຍຫ້າຄົນ
ຂອງ ມີການ ລາຊະທິດາຂອງ ຊາອູນ ຊຶ່ງນາງຖືພາກັບ ອັດຣີເອນ ລູກຊາຍ ບາຊິລາຍ ຊາວ ເມໂຮ-
ລາດ [9]ພະອົງຊົງມອບຄົນເຫລົ່ານີ້ໄວ້ໃນມືຂອງຄົນ ກິເບໂອນ ພວກເຂົາຈຶ່ງແຂວນຄໍທັງເຈັດໄວ້
ເທິງພູເຂົາຕໍ່ພຣະພັກພະຜູ້ເປັນເຈົ້າ ແລະທັງເຈັດຄົນກໍຕາຍພ້ອມກັນ ພວກເຂົາຖືກຂ້າຕາຍໃນ
ລະດູກ່ຽວເຂົ້າໃນມື້ທຳອິດຂອງການເລີ່ມຕົ້ນກ່ຽວເຂົ້າບາເລ.

[10]ແລ້ວນາງ ຣິດຊະປາ ລູກສາວຂອງ ອາອີຢາ ເອົາຜ້າກະສອບປູໄວ້ເທິງກ້ອນຫີນສຳລັບຕົນ
ເອງ ຕັ້ງແຕ່ຕົ້ນລະດູກ່ຽວເຂົ້າຈົນຝົນຕົກຮຳພວກເຂົາ ນາງບໍ່ໃຫ້ນົກມາຈັບພວກເຂົາໃນເວລາ
ກາງເວັນ ແລະບໍ່ໃຫ້ສັດປ່າມາໃນກາງຄືນ [11]ມີຄົນກາບທູນ ດາວິດ ວ່ານາງ ຣິດຊະປາ ລູກສາວ
ຂອງ ອາອີຢາ ເມຍນ້ອຍຂອງ ຊາອູນ ເຮັດຢ່າງນັ້ນ [12]ດາວິດກໍສະເດັດໄປເອົາກະດູກຂອງ ຊາອູນ
ແລະກະດູກຂອງ ໂຢນາທານ ລູກຊາຍຂອງ ຊາອູນ ມາຈາກຊາວເມືອງ ຢາເບດ ແຂວງ ກີເລອາດ
ຊຶ່ງໄດ້ລັກເອົາອອກຈາກ ເມືອງ ເບັດ-ເຊອານ ບ່ອນທີ່ຄົນ ຟີລິດສະຕິນ ໄດ້ແຂວນພະອົງທັງສອງ
ໄວ້ໃນມື້ທີ່ຄົນ ຟີລິດສະຕິນ ໄດ້ຕີຊະນະ ຊາອູນ ເທິງພູເຂົາ ກິນໂບອາ [13]ກະສັດ ດາວິດ ໄດ້ນຳກະ-
ດູກຂອງ ຊາອູນ ແລະກະດູກຂອງ ໂຢນາທານ ລູກຊາຍຂອງພະອົງອອກຈາກບ່ອນນັ້ນ ແລະ
ເກັບກະດູກຂອງຄົນທັງເຈັດທີ່ຖືກແຂວນຄໍນັ້ນ.

[14]ແລະພວກເຂົາໄດ້ເອົາກະດູກຄົນເຫລົ່ານັ້ນພ້ອມທັງກະດູກຂອງ ຊາອູນ ແລະກະດູກຂອງ
ໂຢນາທານ ລູກຊາຍ ຂອງ ຊາອູນ ໄປຝັງໄວ້ໃນ ແຜ່ນດິນຂອງ ເບັນຢາມິນ ຢູ່ເມືອງ ເຊລາ ໃນອຸບ
ໂມງຂອງ ກີເຊ ພໍ່ຂອງ ຊາອູນ, ພວກເຂົາໄດ້ເຮັດທຸກສິ່ງຕາມກະສັດ ດາວິດ ສັ່ງໄວ້, ຕໍ່ມາ ພຣະ-
ເຈົ້າ ໂຜດຊົງຮັບຟັງຄຳອ້ອນວອນເພື່ອແຜ່ນດິນນັ້ນ.

[15]ພວກ ຟີລິດສະຕິນ ໄດ້ເຮັດສົງຄາມຕໍ່ສູ້ຄົນ ອິສຣາເອນອີກ ດາວິດກໍລົງໄປພ້ອມກັບທະຫານ
ຂອງພະອົງ ແລະໄດ້ສູ້ຮົບກັບຄົນ ຟີລິດສະຕິນ ແລະ ດາວິດອ່ອນເພຍຫລາຍ [16]ອິດບີເບໂນບ ທີ່
ເປັນລູກຊາຍຄົນໜຶ່ງຂອງຄົນທີ່ມີຮູບຮ່າງໃຫຍ່ ຖືຫອກທອງສຳລິດໜັກສາມຮ້ອຍເຊເຂ ມີດາບ
ໃໝ່ຄາດແອວຄິດຈະຂ້າ ດາວິດ [17]ແຕ່ ອາບີຊາຍ ລູກຊາຍຂອງນາງ ເຊຣູຢາ ເຂົ້າມາຊ່ວຍ ດາວິດ
ໄວ້ທັນ ແລະສູ້ຮົບກັບຄົນ ຟີລິດສະຕິນ ຄົນນັ້ນ ຂ້າລາວ ແລ້ວບັນດາຄົນຂອງ ດາວິດກໍປະຕິຍານ
ຕໍ່ເພິ່ນວ່າ “ຂໍພະອົງຢ່າສະເດັດໄປເຮັດເສິກພ້ອມກັບພວກຂ້ານ້ອຍ ທັງຫລາຍອີກຕໍ່ໄປ ເພື່ອພະ
ອົງຈະບໍ່ດັບໂຄມໄຟຂອງ ອິສຣາເອນ.”

[18]ຢູ່ມາຫລັງຈາກນັ້ນ ຍັງມີການສູ້ຮົບກັບຄົນ ຟີລິດສະຕິນ ອີກທີ່ເມືອງ ໂກບ ຄາວນັ້ນເພິ່ນ
ສິບເບກາຍ ຄົນ ຮູຊາຍ ໄດ້ຂ້າ ສາເຟ ລູກຊາຍຄົນໜຶ່ງຂອງຄົນຮ່າງໃຫຍ່ [19]ແລະມີການສູ້ຮົບກັບ
ຄົນ ຟີລິດສະຕິນ ທີ່ເມືອງ ໂກບ ອີກ ເອນຮະນັນ ລູກຊາຍ ຢາອາເຣໂອເຣກິມ ຊາວ ເບັດເລເຮັມ ໄດ້
ຂ້າລູກຊາຍ ໂກລີອາດ ຊາວ ກັດ ຜູ້ມີຫອກທີ່ມີດ້າມໃຫຍ່ເທົ່າກັບໄມ້ກຳພັ່ນຕຳແຜ່ນ [20]ມີການສູ້
ຮົບກັນອີກທີ່ ເມືອງ ກັດ ຊຶ່ງ ເປັນ ເມືອງທີ່ມີຊາຍຄົນໜຶ່ງຮູບຮ່າງໃຫຍ່, ມີນິ້ວມືເບື້ອງລະຫົກນິ້ວ
ແລະນິ້ວຕີນເບື້ອງລະຫົກນິ້ວ ລວມກັນເປັນຊາວສີ່ນິ້ວ ລາວເກີດຈາກຄົນຮ່າງໃຫຍ່ຄືກັນ [21]ເມື່ອ
ລາວໄດ້ທ້າທາຍ ອິສຣາເອນ, ໂຢນາທານ ລູກຊາຍຂອງ ຊິເມອີ ອ້າຍຂອງ ດາວິດ ກໍໄດ້ຂ້າລາວ

[22]ຄົນທັງສີ່ນີ້ເກີດຈາກຄົນຮູບຮ່າງໃຫຍ່ໃນເມືອງ ກັດ, ພວກເຂົາຖືກຂ້າດ້ວຍພະຫັດຂອງ ດາວິດ
ແລະດ້ວຍມືຂອງຂ້າລາຊະການຂອງພະອົງ.

# ບົດທີ 22

## ເພງໄຊຊະນະຂອງດາວິດ

[1]ຕໍ່ໄປນີ້ ແມ່ນບົດເພງທີ່ດາວິດໄດ້ຮ້ອງສັນລະເສີນ ພຣະຜູ້ເປັນເຈົ້າຄາວເມື່ອພະອົງຊົງຊ່ວຍ
ດາວິດໃຫ້ພົ້ນຈາກເງື້ອມມືຂອງຊາອູນ ແລະສັດຕູຄົນອື່ນໆ ຂອງພະອົງ.

[2] "ພຣະຜູ້ເປັນເຈົ້າຊົງເປັນພຣະຜູ້ຊ່ອຍໃຫ້ພົ້ນຂອງຂ້ານ້ອຍ
  ພຣະອົງຊົງເປັນປ້ອມປ້ອງກັນອັນແໜ້ນໜາຂອງຂ້ານ້ອຍ.
[3] ພຣະເຈົ້າຂອງຂ້ານ້ອຍຊົງເປັນຜູ້ຄຸ້ມຄອງຂອງຂ້ານ້ອຍ
  ແລະຂ້ານ້ອຍກໍຢູ່ນຳພຣະອົງຢ່າງປອດໄພ.
ພຣະອົງຊົງເປັນເໝືອນແຜ່ນເຫລັກຕ້ານທານປ້ອງກັນຂ້ານ້ອຍໄວ້
  ພຣະອົງປ້ອງກັນຂ້ານ້ອຍໃຫ້ປອດໄພ
ພຣະອົງຊົງເປັນພຣະຜູ້ຊ່ອຍຂອງຂ້ານ້ອຍ
  ພຣະອົງຊົງປ້ອງກັນ ແລະຊ່ອຍຂ້ານ້ອຍໃຫ້ພົ້ນ
ຈາກການທຳລາຍອັນຮ້າຍແຮງ.
[4] ຂ້ານ້ອຍຮ້ອງຫາພຣະຜູ້ເປັນເຈົ້າ
  ແລະພຣະອົງກໍຊົງຊ່ອຍຂ້ານ້ອຍໃຫ້ພົ້ນຈາກສັດຕູ
ຈົ່ງສັນລະເສີນພຣະຜູ້ເປັນເຈົ້າ.
[5] ຄື້ນແຫ່ງຄວາມຕາຍໄດ້ອ້ອມຮອບຂ້ານ້ອຍຢູ່
  ຄື້ນແຫ່ງການທຳລາຍໄດ້ໄຫລຖ້ວມຂ້ານ້ອຍ.
[6] ເຊືອກແຫ່ງຄວາມຕາຍໄດ້ມັດອ້ອມຂ້ານ້ອຍໄວ້
  ຄວາມຕາຍຫ້າງແຮ້ວໃສ່ຂ້ານ້ອຍ.
[7] ເມື່ອຢູ່ໃນຄວາມທຸກຍາກລຳບາກ ຂ້ານ້ອຍຮ້ອງຫາພຣະຜູ້ເປັນເຈົ້າ
  ຂ້ານ້ອຍໄດ້ຮ້ອງຂໍຄວາມຊ່ອຍເຫລືອຈາກພຣະເຈົ້າຂອງຂ້ານ້ອຍ
ພຣະອົງຊົງໄດ້ຍິນສຽງຂ້ານ້ອຍຢູ່ໃນພຣະວິຫານຂອງພຣະເຈົ້າ
  ພຣະອົງຊົງຟັງສຽງຮ້ອງຂໍຄວາມຊ່ອຍເຫລືອຈາກຂ້ານ້ອຍ.
[8] ແລ້ວໂລກທັງໂລກກໍສັ່ນສະທ້ານຫວັ່ນໄຫວ
  ຮາກເຫງົ້າທ້ອງຟ້າສັ່ນຄອນ ແລະສະທ້ານສະເທືອນ
ເພາະວ່າພຣະເຈົ້າຊົງພຣະພິໂລດ.
[9] ຄວັນໄຟໄດ້ພຸ່ງອອກຈາກຮູດັງພຣະອົງ
  ແປວໄຟອັນຮ້ອນແຮງໄດ້ອອກມາຈາກປາກພຣະອົງເໝືອນຖ່ານໄຟ.
[10] ພຣະອົງຊົງເຮັດໃຫ້ທ້ອງຟ້າຕໍ່າລົງ ແລະສະເດັດລົງມາ

ພ້ອມດ້ວຍກ້ອນເມກອັນໜາຕຶບຢູ່ໃຕ້ພຣະບາດຂອງພຣະອົງ.
11 ພຣະອົງສະເດັດລົງມາເທິງຫລັງເທວະດາເຄຣຸບ
ພຣະອົງສະເດັດລົງມາຕາມລົມຢ່າງວ່ອງໄວ.
12 ພຣະອົງຫຸ້ມຫໍ່ພຣະອົງເອງ ດ້ວຍຄວາມມືດ
ກ້ອນເມກອັນໜາຕຶບທີ່ເຕັມໄປດ້ວຍນໍ້າໄດ້ອ້ອມຮອບພຣະອົງ.
13 ແສງຖ່ານໄຟເໝືອນຟ້າແມບເຫລື້ອມຕໍ່ພຣະພັກພຣະອົງ.
14 ແລ້ວພຣະຜູ້ເປັນເຈົ້າຊົງຮ້ອງເພງດັງຈາກທ້ອງຟ້າ
ແລະສຽງຂອງພຣະເຈົ້າອົງສູງສຸດກໍໄດ້ຍິນທົ່ວໄປ.
15 ພຣະອົງຊົງຍິງໜ້າທະນູ ແລະຂັບໄລ່ສັດຕູທັງຫລາຍຂອງພຣະອົງ
ແຕກກະຈັດກະຈາຍໄປ
ພຣະອົງຊົງສົ່ງຟ້າແມບເຫລື້ອມໄລ່ໃຫ້ພວກເຂົາປົບໜີ
ເມື່ອພຣະຜູ້ເປັນເຈົ້າຊົງນາບຄູ່ພວກສັດຕູຂອງພຣະອົງ
ແລະຮ້ອງໃສ່ພວກເຂົາດ້ວຍຄວາມຄຽດຮ້າຍ.
16 ພື້ນມະຫາສະໝຸດກໍປະກົດອອກມາ
ຮາກຖານຂອງໂລກກໍບໍ່ມີຫຍັງຫຸ້ມຫໍ່.
17 ພຣະຜູ້ເປັນເຈົ້າຊົງຢື້ລົງມາຈາກສະຫວັນ ແລະຊົງອູ້ມຊູຂ້ານ້ອຍ
ພຣະອົງຊົງເອົາຂ້ານ້ອຍຂຶ້ນຈາກນໍ້າເລິກ.
18 ພຣະອົງຊົງຊ່ອຍຊີວິດຂ້ານ້ອຍໃຫ້ພົ້ນຈາກຜູ້ທີ່ກຽດຊັງຂ້ານ້ອຍ
ແລະໃຫ້ພົ້ນຈາກສັດຕູຂອງຂ້ານ້ອຍທີ່ມີອຳນາດເໜືອຂ້ານ້ອຍ.
19 ເວລາຂ້ານ້ອຍຢູ່ໃນຄວາມລຳບາກ ສັດຕູໄດ້ມາຕໍ່ສູ້ຂ້ານ້ອຍ
ແຕ່ພຣະຜູ້ເປັນເຈົ້າຊົງປ້ອງກັນຂ້ານ້ອຍໄວ້.
20 ພຣະອົງຊົງຊ່ອຍເຫລືອຂ້ານ້ອຍໃຫ້ພົ້ນຈາກອັນຕະລາຍ
ພຣະອົງຊົງຊ່ອຍຂ້ານ້ອຍໃຫ້ພົ້ນ ເພາະພຣະອົງຊົງ
ພໍພຣະໄທໃນຂ້ານ້ອຍ.
21 ພຣະຜູ້ເປັນເຈົ້າຊົງໃຫ້ລາງວັນແກ່ຂ້ານ້ອຍ
ເພາະວ່າຂ້ານ້ອຍເປັນຄົນຊອບທຳ
ພຣະອົງຊົງອວຍພອນຂ້ານ້ອຍ
ເພາະວ່າມືຂອງຂ້ານ້ອຍສະອາດບໍລິສຸດ.
22 ຂ້ານ້ອຍໄດ້ເດີນຕາມເສັ້ນທາງຂອງພຣະອົງ
ແລະຂ້ານ້ອຍບໍ່ໄດ້ຫ່າງຈາກພຣະອົງເລີຍ.
23 ຂ້ານ້ອຍໄດ້ເຮັດຕາມກົດຂໍ້ບັນຍັດທຸກຢ່າງຂອງພຣະອົງ
ຂ້ານ້ອຍບໍ່ໄດ້ລະເມີດຂໍ້ຄຳສັ່ງຂອງພຣະອົງ.
24 ພຣະອົງຊົງຮູ້ວ່າ ຂ້ານ້ອຍເປັນຄົນບໍ່ມີຄວາມຜິດ

ແລະຮູ້ວ່າຂ້ານ້ອຍໄດ້ລະວັງຕົວບໍ່ເຮັດການຊົ່ວຮ້າຍ.
25 ແລະພຣະອົງຊົງໃຫ້ລາງວັນຂ້ານ້ອຍ ເພາະວ່າຂ້ານ້ອຍ
ເປັນຄົນຊອບທຳ ເພາະພຣະອົງຮູ້ວ່າ
ຂ້ານ້ອຍເປັນຄົນບໍລິສຸດ.
26 ຂ້າແດ່ພຣະຜູ້ເປັນເຈົ້າພຣະອົງຊົງສະແດງຄວາມຮັກ
ອັນໝັ້ນຄົງຕໍ່ຜູ້ທີ່ສັດຊື່
ພຣະອົງຊົງເຮັດດີທີ່ສຸດຕໍ່ຜູ້ທີ່ເຮັດແຕ່ຄວາມດີ.
27 ພຣະອົງຊົງບໍລິສຸດໃຈຕໍ່ຜູ້ທີ່ບໍລິສຸດໃຈ
ແຕ່ວ່າ ພຣະອົງຊົງເປັນສັດຕູກັບພວກຄົນຊົ່ວຮ້າຍ.
28 ພຣະອົງຊົງຊ່ອຍຊີວິດທີ່ຖ່ອມຕົວໃຫ້ພົ້ນໄພ
ແຕ່ວ່າພຣະອົງຊົງໃຫ້ຄົນຈອງຫອງຖ່ອມຕົວລົງ.
29 ຂ້າແດ່ພຣະຜູ້ເປັນເຈົ້າພຣະອົງຊົງເປັນແສງສະຫວ່າງຂອງຂ້ານ້ອຍ
ພຣະອົງຊົງເຮັດໃຫ້ຄວາມມືດມົວຂອງຂ້ານ້ອຍສູນສະຫລາຍໄປ.
30 ພຣະອົງຊົງປະທານກຳລັງໃຫ້ຂ້ານ້ອຍຕໍ່ສູ້ພວກສັດຕູ
ແລະຊົງປະທານເຫື່ອແຮງໃຫ້ຂ້ານ້ອຍ
ໂດດຂ້າມກຳແພງປ້ອງກັນຂອງພວກເຂົາ.
31 ສ່ວນການກະທຳຂອງພຣະເຈົ້າຖືກຕ້ອງສົມບູນທີ່ສຸດ
ຄຳເວົ້າຂອງພຣະອົງຊົງເປັນທີ່ໄວ້ວາງໃຈໄດ້ຢ່າງຍິ່ງ
ພຣະອົງຊົງເໝືອນແຜ່ນເຫລັກຕ້ານທານ
ສຳລັບທຸກຄົນທີ່ຊອກຫາການປ້ອງກັນຈາກພຣະອົງ.
32 ພຣະຜູ້ເປັນເຈົ້າເທົ່ານັ້ນທີ່ຊົງເປັນພຣະເຈົ້າ
ບໍ່ມີໃຜເປັນຜູ້ປົກປ້ອງຮັກສາພວກຂ້ານ້ອຍໄດ້ນອກຈາກພຣະອົງ.
33 ພຣະເຈົ້າເປັນເໝືອນປ້ອມຍາມແຂງແຮງຂອງຂ້ານ້ອຍ
ພຣະອົງຊົງໃຫ້ຫົນທາງຂອງຂ້ານ້ອຍປອດໄພ.
34 ພຣະອົງຊົງໃຫ້ຂ້ານ້ອຍຍ່າງທ່ຽງເໝືອນກວາງ
ພຣະອົງຊົງຮັກສາຂ້ານ້ອຍໃຫ້ປອດໄພຢູ່ເທິງພູ.
35 ພຣະອົງຊົງຝຶກແອບຂ້ານ້ອຍ ເພື່ອຕຽມເຂົ້າສະໜາມຮົບ
ເພື່ອວ່າຂ້ານ້ອຍຈະກົ່ງໜ້າທະນູອັນແຂງໄດ້.
36 ຂ້າແດ່ພຣະຜູ້ເປັນເຈົ້າພຣະອົງຊົງປ້ອງກັນຂ້ານ້ອຍ
ແລະຊ່ອຍຂ້ານ້ອຍໃຫ້ພົ້ນໄພ
ການຊ່ອຍເຫລືອຂອງພຣະອົງເຮັດໃຫ້ຂ້ານ້ອຍມີອຳນາດ.
37 ພຣະອົງຊົງຊ່ອຍໃຫ້ຂ້ານ້ອຍ ໄປໃນທາງກວ້າງ
ແລະບໍ່ໃຫ້ຂ້ານ້ອຍເຕະສະດຸດຈັກເທື່ອເລີຍ.

38 ຂ້ານ້ອຍໄດ້ໄລ່ສັດຕູທັງຫລາຍຂອງຂ້ານ້ອຍ
ແລະໄດ້ທຳລາຍພວກມັນ
ຂ້ານ້ອຍບໍ່ຍອມຢຸດຈົນກວ່າໄດ້ຊະນະມັນ.
39 ຂ້ານ້ອຍຕີພວກມັນລົ້ມລົງ ຈົນພວກມັນລຸກຂຶ້ນບໍ່ໄດ້
ພວກມັນເສຍໄຊລົ້ມລົງກ້ອງຕີນຂ້ານ້ອຍ.
40 ພຣະອົງຊົງປະທານໃຫ້ຂ້ານ້ອຍມີກຳລັງແຂງແຮງ
ອອກໄປສູ່ສະໜາມຮົບ
ແລະຊົງປະທານໃຫ້ຂ້ານ້ອຍຊະນະສັດຕູທັງຫລາຍ.
41 ພຣະອົງຊົງເຮັດໃຫ້ສັດຕູຂອງຂ້ານ້ອຍປົບໜີ
ຂ້ານ້ອຍໄດ້ທຳລາຍພວກທີ່ກຽດຊັງຂ້ານ້ອຍ.
42 ພວກເຂົາຊອກຫາຄວາມຊ່ອຍເຫລືອ ແຕ່ບໍ່ມີໃຜຊ່ອຍພວກເຂົາໃຫ້ພົ້ນໄດ້
ພວກເຂົາຮ້ອງຫາ **ພຣະຜູ້ເປັນເຈົ້າ** ແຕ່ວ່າພຣະອົງບໍ່ຊົງຕອບພວກເຂົາ.
43 ຂ້ານ້ອຍໄດ້ທຳລາຍພວກເຂົາໃຫ້ມຸ່ນ ເໝືອນຂີ້ຝຸ່ນດິນ
ຂ້ານ້ອຍໄດ້ຢຽບພວກເຂົາເໝືອນຢຽບຂີ້ຕົມໃນຫົນທາງ.
44 ພຣະອົງຊົງຊ່ອຍຂ້ານ້ອຍໃຫ້ພົ້ນຈາກປະຊາຊົນ
ຂອງຂ້ານ້ອຍຜູ້ເປັນກະບົດ
ແລະຊົງໂຜດໃຫ້ຂ້ານ້ອຍໄດ້ເປັນຜູ້ປົກຄອງຊົນຊາດທັງຫລາຍ
ຊົນຊາດທີ່ຂ້ານ້ອຍບໍ່ເຄີຍຮູ້ຈັກກໍຮັບໃຊ້ຂ້ານ້ອຍ.
45 ຄົນຕ່າງປະເທດໄດ້ກົ້ມຂາບລົງຕໍ່ໜ້າຂ້ານ້ອຍ
ເມື່ອພວກເຂົາໄດ້ຍິນສຽງຂ້ານ້ອຍ ພວກເຂົາກໍເຊື່ອຟັງ.
46 ພວກເຂົາສູນເສຍຄວາມກ້າຫານ
ແລະຕົວສັ່ນສາຍອອກມາຈາກປ້ອມປ້ອງກັນຂອງພວກເຂົາ.
47 **ພຣະຜູ້ເປັນເຈົ້າ** ຊົງພຣະຊົນຢູ່ ຂ້ານ້ອຍສັນລະເສີນຜູ້ປົກຄອງຮັກສາຂອງຂ້ານ້ອຍ
**ພຣະເຈົ້າ** ຊົງເປັນພະຜູ້ຊ່ອຍທີ່ແຂງແຮງຂອງຂ້ານ້ອຍ
ຈົ່ງປະກາດຄວາມຍິ່ງໃຫຍ່ຂອງພຣະອົງ.
48 ພຣະອົງຊົງໂຜດໃຫ້ຂ້ານ້ອຍຊະນະສັດຕູທັງຫລາຍຂອງຂ້ານ້ອຍ
ພຣະອົງຊົງປາບປາມຊົນຊາດຕ່າງໆໃຫ້ຢູ່ໃຕ້ອຳນາດຂອງຂ້ານ້ອຍ.
49 ແລະພຣະອົງຊົງຊ່ອຍຊີວິດຂ້ານ້ອຍໃຫ້ພົ້ນຈາກສັດຕູຂອງຂ້ານ້ອຍ
ພຣະອົງຊົງຍົກຍໍຂ້ານ້ອຍໃຫ້ຢູ່ເໜືອກວ່າສັດຕູ
ແລະປ້ອງກັນຂ້ານ້ອຍໃຫ້ພົ້ນຈາກຄົນໂຫດຮ້າຍທາລຸນ.
50 ດັ່ງນີ້ແຫລະ ຂ້ານ້ອຍຈະສັນລະເສີນພຣະອົງທ່າມກາງຊົນຊາດຕ່າງໆ
ຂ້ານ້ອຍຈະຮ້ອງເພງສັນລະເສີນແດ່ພຣະອົງ.
51 **ພຣະເຈົ້າ** ຊົງປະທານໄຊຊະນະອັນຍິ່ງໃຫຍ່ແກ່ກະສັດທີ່ພຣະອົງຊົງເລືອກ

ພຣະອົງຊົງສະແດງຄວາມຮັກອັນໝັ້ນຄົງ
ແກ່ຜູ້ທີ່ພຣະອົງຊົງເລືອກໄວ້ແລ້ວ
ຄື ແກ່ດາວິດ ແລະເຊື້ອສາຍຂອງ ດາວິດ ຕະຫລອດໄປ.”

# ບົດທີ 23

## ຄຳເວົ້າສຸດທ້າຍຂອງດາວິດ

1ຕໍ່ໄປນີ້ ເປັນຄຳເວົ້າເທື່ອສຸດທ້າຍຂອງ ດາວິດ ດາວິດ ເປັນລູກຊາຍຂອງ ເຢຊີ ເປັນຜູ້ທີ່
ພຣະເຈົ້າ ຊົງສ້າງ ໃຫ້ເປັນຜູ້ຍິ່ງ ໃຫຍ່ ຜູ້ທີ່ ພຣະເຈົ້າ ຂອງ ຢາໂຄບ ຊົງ ເລືອກ ເອົາ ເປັນ ເຈົ້າຊີວິດ
ແລະເປັນຜູ້ທີ່ແຕ່ງບົດເພງຂອງຊາວ ອິສຣາເອນ ດາວິດ ໄດ້ເວົ້າວ່າ:

2 “ວິນຍານຂອງ ພຣະຜູ້ເປັນເຈົ້າ ຊົງກ່າວຜ່ານຂ້າພະເຈົ້າ
ຖ້ອຍຄຳຂອງພຣະອົງຊົງຢູ່ໃນສົບປາກຂອງຂ້າພະເຈົ້າ.
3 ພຣະເຈົ້າ ຂອງຊາວ ອິສຣາເອນ ໄດ້ຊົງກ່າວໄວ້
ຜູ້ຄຸ້ມຄອງຊາວ ອິສຣາເອນ ໄດ້ເວົ້າຕໍ່ຂ້າພະເຈົ້າວ່າ,
“ເຈົ້າຊີວິດທີ່ປົກຄອງ ໂດຍຊອບທຳ
ແລະດ້ວຍຄວາມຢຳເກງ ພຣະຜູ້ເປັນເຈົ້າ.
4 ເປັນເໝືອນຕາເວັນສ່ອງແສງ ໃນເວລາເຊົ້າທີ່ບໍ່ມີເມກ
ຕາເວັນນັ້ນ ເຮັດໃຫ້ຫຍ້າປົ່ງຮາກຂຶ້ນມາພາຍຫລັງຝົນຕົກ.
5 ພຣະເຈົ້າ ຈະຊົງອວຍພອນແກ່ເຊື້ອສາຍຂອງຂ້າພະເຈົ້າ
ດັ່ງນີ້ແຫລະ ເພາະວ່າ ພຣະເຈົ້າ ໄດ້ຊົງ ໃຫ້ຄຳໝັ້ນສັນຍາ
ໄວ້ຕະຫລອດໄປກັບຂ້າພະເຈົ້າ
ທຸກສິ່ງກໍໄດ້ຈັດໄວ້ຢ່າງແນ່ນອນ
ທຸກສິ່ງ ເຫລົ່ານີ້ແຫລະເປັນສິ່ງທີ່ຂ້າພະເຈົ້າຕ້ອງການ
ແລະຈະເປັນຄວາມພົ້ນຂອງຂ້າພະເຈົ້າ
ຊຶ່ງ ພຣະເຈົ້າ ເປັນຜູ້ຊົງກະທຳ.
6 ມະນຸດທີ່ອະທຳ ປຽບເໝືອນໜາມທີ່ພວກເຂົາຕັດຖິ້ມ
ຈະບໍ່ມີໃຜເດ່ມືອອກໄປຈັບເອົາມັນໄວ້.
7 ນອກຈາກເຄື່ອງມືທີ່ເຮັດດ້ວຍເຫລັກ ຫລືດ້າມຫອກ
ແລະພວກມັນຈະຖືກເຜົາເສຍໃຫ້ໝົດສິ້ນ.”

## ວິລະບຸລຸດຂອງດາວິດ[ກ]

8ຕໍ່ໄປນີ້ແມ່ນຊື່ຂອງພວກຊາຍສະກັນທີ່ ດາວິດ ມີ ຄື: ໂຢເຊັບ-ບາເຊເບັດ ຊາວ ຕາເຄໂມນ ຜູ້
ມີຕຳແໜ່ງສູງ ເປັນຫົວໜ້າພວກຜູ້ບັງຄັບບັນຊາ; ອາດີໂນ ຄົນ ເອັດຊະນີ ຊຶ່ງເພິ່ນເປັນຜູ້ທີ່ແກວ່ງ
ຫອກ ແທງຄົນ ແປດຮ້ອຍຄົນຕາຍບາດດຽວ 9ພາຍຫລັງ ໂຢເຊັບ-ບາເຊເບັດ ແມ່ນທ່ານ ເອເລອາ-

[ກ]1ຂຄວ 11:10–47

ຊາ ລູກຊາຍ ໂດດາຍ ຄົນ ອາໂຮອາ ເພິ່ນຜູ້ນີ້ເປັນຜູ້ໜຶ່ງໃນພວກຜູ້ຊາຍທີ່ກ້າຫານສາມຄົນທີ່ຢູ່ນຳ
ດາວິດ ເວລາທີ່ພວກເຂົາໄດ້ທ້າທາຍຕໍ່ພວກ ຟີລິດສະຕິນ ຊຶ່ງໄດ້ມາເຕົ້າໂຮມກັນຢູ່ບ່ອນນັ້ນເພື່ອສູ້
ຮົບ ເມື່ອເວລາຄົນ ອິສຣາເອນ ໄດ້ຖອຍທັບ [10]ເພິ່ນໄດ້ລຸກຂຶ້ນຟັນພວກ ຟີລິດສະຕິນ ຈົນມືຂອງ
ເພິ່ນໝົດແຮງ ແລະຈັງແຂນວາງດາບອອກຈາກມືບໍ່ໄດ້, ໃນມື້ນັ້ນ ພຣະຜູ້ເປັນເຈົ້າໄດ້ຊົງໂຜດ
ຊ່ວຍຢ່າງໃຫຍ່ຫລວງ ແລະທະຫານກໍກັບຄືນມາຫາເພິ່ນເພື່ອຢຶດເອົາສິ່ງຂອງເທົ່ານັ້ນ.

[11]ຮອງເພິ່ນລົງມາຄື: ຊາມມາ ລູກຊາຍອາເກເອ ຊາວຮາຣາ; ຄົນ ຟີລິດສະຕິນ ໄດ້ມາເຕົ້າ-
ໂຮມກັນເປັນ ກອງທັບຢູ່ບ່ອນນັ້ນ ຊຶ່ງມີສວນໝາກຖົ່ວແດງເຕັມໄປໝົດ, ພວກທະຫານກໍໄດ້ໜີ
ພວກ ຟີລິດສະຕິນ ໄປ [12]ແຕ່ເພິ່ນຢືນຢູ່ຢ່າງໜັກແໜ້ນທ່າມກາງພື້ນດິນຜືນນັ້ນ ແລະປ້ອງກັນ
ສວນຕອນນັ້ນໄວ້ ເພິ່ນໄດ້ຂ້າພວກ ຟີລິດສະຕິນ ອົງພຣະຜູ້ເປັນເຈົ້າໄດ້ປະທານໄຊຊະນະອັນ
ຍິ່ງໃຫຍ່ໃຫ້.

[13]ໃນພວກທະຫານເອກສາມສິບຄົນນັ້ນມີສາມຄົນທີ່ລົງມາ ແລະໄດ້ມາຫາ ດາວິດ ຢູ່ຖໍ້າອະດຸ-
ລາມ ໃນລະດູກ່ຽວ ເຂົ້າ ເມື່ອພວກ ຟີລິດສະຕິນ ກອງໜຶ່ງຕັ້ງຄ້າຍຢູ່ໃນຮ່ອມພູ ເຣຟາຢິມ [14]ຄາວ
ນັ້ນ ດາວິດ ຢູ່ໃນບ່ອນກຳບັງທີ່ເຂັ້ມແຂງ ແລະກອງທັບຂອງພວກ ຟີລິດສະຕິນ ຢູ່ທີ່ ເບັດເລເຮັມ
[15]ດາວິດ ກ່າວດ້ວຍຄວາມຄ່ຳຄວນວ່າ "ໃຜໜໍຈະເອົານ້ຳຈາກນ້ຳສ້າງທີ່ ເບັດເລເຮັມ ຊຶ່ງຢູ່ຂ້າງ
ປະຕູເມືອງມາໃຫ້ ເຮົາດື່ມໄດ້!" [16]ຊາຍສະກັນສາມຄົນນັ້ນກໍຜ່າຄ້າຍຄົນ ຟີລິດສະຕິນ ເຂົ້າໄປຕັກ
ເອົານ້ຳໃນນ້ຳສ້າງທີ່ ເບັດເລເຮັມ ຊຶ່ງຢູ່ຂ້າງປະຕູເມືອງ ນຳມາຖວາຍແກ່ ດາວິດ ແຕ່ ດາວິດ ບໍ່ໄດ້
ດື່ມນ້ຳນັ້ນ ພະອົງຊົງຖອກອອກຖວາຍແກ່ພຣະຜູ້ເປັນເຈົ້າ [17]ແລະເພິ່ນກ່າວວ່າ "ຂ້າແດ່ພຣະ-
ຜູ້ເປັນເຈົ້າ ຊຶ່ງຂ້າພຣະອົງຈະ (ດື່ມນ້ຳນີ້ກໍບໍ່ສົມຄວນ) ການເຮັດເຊັ່ນນີ້ ກໍຂໍໃຫ້ຫ່າງໄກຈາກ
ຂ້າພະອົງ, ນີ້ຄືເລືອດຂອງຜູ້ທີ່ໄປເອົາມາດ້ວຍການສ່ຽງຊີວິດຂອງພວກເຂົາບໍ່ແມ່ນບໍ?" ດ້ວຍ
ເຫດນັ້ນ ພະອົງຈຶ່ງບໍ່ຊົງດື່ມ. ສິ່ງເຫລົ່ານີ້ແມ່ນ ທະຫານທີ່ເກັ່ງກ້າສາມາດທັງສາມໄດ້ເຮັດ.

[18]ຝ່າຍ ອາບີຊາຍ ນ້ອງຊາຍຂອງ ໂຢອາບ ລູກຊາຍນາງ ເຊຣູຢາ ເປັນຫົວໜ້າຂອງທັງສາມຄົນ
ນັ້ນ ເພິ່ນໄດ້ໃຊ້ຫອກສູ້ຮົບກັບທະຫານສາມຮ້ອຍຄົນ ແລະຂ້າພວກເຂົາຕາຍໝົດ ແລະໄດ້ຮັບຊື່
ສຽງຄືກັບວິລະບູລຸດສາມຄົນນັ້ນ [19]ເພິ່ນເປັນຜູ້ທີ່ມີຊື່ສຽງໂດ່ງດັງກວ່າໝູ່ໃນສາມຄົນນັ້ນບໍ່ແມ່ນ
ບໍ? ສະນັ້ນ ເພິ່ນຈຶ່ງເປັນຜູ້ບັງຄັບບັນຊາຂອງພວກເຂົາ, ແຕ່ເພິ່ນບໍ່ມີຍົດເທົ່າກັບສາມຄົນທຳອິດ
ນັ້ນ.

[20]ເບນາຢາ ລູກຊາຍ ເຢໂຮຢາດາ ເປັນລູກຊາຍຂອງຄົນກ້າຫານແຫ່ງເມືອງ ກັບເຊເອນ ເປັນ
ຄົນເຮັດສິ່ງທີ່ທ້າທາຍ ເພິ່ນໄດ້ຂ້າຄົນຄືດັ່ງໂຕສິງໃຫຍ່ຂອງ ໂມອາບ ສອງຄົນ ແລະໄດ້ລົງໄປຂ້າ
ສິງໃຫຍ່ໃນຂຸມ ໃນມື້ທີ່ມີຫິມະຕົກ. [21]ແລະແມ່ນຜູ້ນີ້ທີ່ໄດ້ຂ້າຄົນ ເອຢິບ ຄົນໜຶ່ງທີ່ເປັນຊາຍຮູບ
ຮ່າງງາມ ຄົນ ເອຢິບ ຄົນນັ້ນຖືຫອກຢູ່ ແຕ່ເບໄນຍາຖືໄມ້ ເທົ້າລົງໄປຫາລາວ ແລະຍາດເອົາ
ຫອກມາຈາກມືຂອງຄົນ ເອຢິບ ຄົນນັ້ນ ແລະຂ້າຜູ້ນັ້ນຕາຍດ້ວຍຫອກຂອງລາວເອງ. [22]ເບໄນຢາ
ລູກຊາຍ ເຢໂຮຢາດາ ໄດ້ເຮັດການເຫລົ່ານີ້ ແລະໄດ້ມີຊື່ສຽງດັ່ງວິລະບູລຸດສາມຄົນນັ້ນ [23]ເພິ່ນມີ
ຊື່ສຽງໂດ່ງດັງກວ່າສາມຄົນນັ້ນ ແຕ່ເພິ່ນບໍ່ມີຍົດເທົ່າກັບສາມຄົນທຳອິດນັ້ນ ແລະ ດາວິດ ກໍຊົງ
ແຕ່ງເພິ່ນ ໃຫ້ເປັນຜູ້ບັງຄັບບັນຊາທະຫານຮັກສາພະອົງ.

[24]ອາສາເຮນ ນ້ອງຊາຍຂອງ ໂຢອາບ ເປັນຄົນໜຶ່ງໃນສາມສິບຄົນນັ້ນ, ເອນຮະນັນ ລູກຊາຍ
ຂອງ ໂດໂດ ຊາວ ເບັດເລເຮັມ [25]ຊາມມາ ຊາວເມືອງ ຮາໂຣດ ເອລີກາ ຊາວເມືອງ ຮາໂຣດ [26]ເຮ-
ເລັດ ຄົນ ປານຕີ ອີຣາ ລູກຊາຍ ອີກເກດ ຊາວເມືອງ ເຕໂກອາ [27]ອາບີເອເຊ ຊາວເມືອງ ອານາ-
ໂທດ ເມບຸນນາຍ ຄົນຮູຊາຍ [28]ຊານໂມນ ຊາວ ອາໂຮອາ ມາຣາຮາຍ ຊາວ ເນໂຕຟາ [29]ເຮເລັບ
ລູກຊາຍ ບາອານາ ຊາວ ເນໂຕຟາ ອິດຕາຍ ລູກຊາຍ ຣິບາຍ ຊາວ ກິເບອາ ແຫ່ງຄົນ ເບັນຢາມິນ
[30]ເບໄນຢາ ຊາວ ປີຣາໂທນ ຮິດດາຍ ຊາວລຳທານ ກາອາດ [31]ອາບີອານໂບນ ຄົນ ອາບາດ ອາ-
ຊະມາເວດ ຊາວ ບາຮຸມ [32]ເອລີຢາບາ ຊາວ ຊາອານໂບນ ໂຢນາທານ ຊຶ່ງເປັນຄົນໜຶ່ງໃນບັນດາ
ລູກຊາຍຂອງ ຢາເຊນ [33]ຊາມມາ ຊາວ ຮາຣາ ອາຮີອາມ ລູກຊາຍຂອງ ຊາຣານ ຄົນ ຮາຣາ [34]ເອ-
ລີເຟເລັດ ລູກຊາຍ ອາຮາສະບາຍ ລູກຊາຍຂອງຊາວ ມາອາກາ ເອລີອາມ ລູກຊາຍ ອາຮີໂທເຟັນ
ຊາວ ກີໂລ [35]ເຮດຊະໂຣ ຊາວ ກາເມນ ປາອາຣາຍ ຊາວ ອາຣະບາ [36]ອີການ ລູກຊາຍ ນາທານ
ຊາວ ໂຊບາ ບານີ ຄົນ ຄາດ [37]ເຊເລັກ ຄົນ ອຳໂມນ ນາຣາຣາຍ ຊາວ ເບເອໂຣດ ຄົນຖືເຄື່ອງ
ອາວຸດຂອງ ໂຢອາບ ລູກຊາຍນາງ ເຊຣູຢາ [38]ອີຣາ ຄົນ ອິດຣີ ກາເຣບ ຄົນ ອິດຣີ [39]ອູຣີຢາ ຄົນ
ຮິດຕີ ລວມສາມສິບເຈັດຄົນນຳກັນ.

# ບົດທີ 24

## ດາວິດນັບຈຳນວນປະຊາຊົນ

[1]ຢູ່ມາ ພຣະຜູ້ເປັນເຈົ້າ ຊົງພຣະພິໂລດຊາວ ອິສຣາເອນ ພຣະອົງໄດ້ຊົງບັນດານໃຫ້ ດາວິດ
ນຳເອົາຄວາມຍາກລຳບາກໃຫ້ພວກເຂົາ ພຣະຜູ້ເປັນເຈົ້າກ່າວຕໍ່ ດາວິດ ວ່າ, “ໄປນັບຄົນ ອິສຣາ-
ເອນ ແລະຄົນ ຢູດາ ເບິ່ງດູ.” [2]ດັ່ງນັ້ນ ດາວິດ ຈຶ່ງເວົ້າຕໍ່ ໂຢອາບ ຜູ້ບັງຄັບບັນຊາທະຫານຂອງ
ພະອົງວ່າ, “ທ່ານເອງກັບນາຍທະຫານຂອງທ່ານ ຈົ່ງພາກັນອອກໄປໃນທົ່ວທຸກຕະກູນທົ່ວທັງ
ປະເທດ ແລ້ວນັບເບິ່ງປະຊາຊົນ ເພາະເຮົາຢາກຮູ້ວ່າພວກເຂົາມີຫລາຍເທົ່າໃດ.”

[3]ແຕ່ ໂຢອາບ ກາບທູນເຈົ້າຊີວິດວ່າ, “ຂ້າແດ່ພະອົງ ຂໍໃຫ້ພຣະຜູ້ເປັນເຈົ້າຂອງພະອົງເຮັດໃຫ້
ປະຊາຊົນ ອິສຣາເອນ ເພີ່ມຫລາຍຂຶ້ນກວ່າດຽວນີ້ຮ້ອຍເທົ່າ ແລະຂໍໃຫ້ພະລາຊາຊົງພະຈະເລີນຢູ່
ຈົນໄດ້ເຫັນສິ່ງທີ່ພຣະຜູ້ເປັນເຈົ້າຈະຊົງກະທຳນີ້ ແຕ່ວ່າເປັນຫຍັງພະອົງຈຶ່ງຢາກຮູ້ເລື່ອງນີ້?”

[4]ແຕ່ເຈົ້າຊີວິດໄດ້ບັງຄັບໃຫ້ ໂຢອາບ ແລະພວກນາຍທະຫານປະຕິບັດຕາມຄຳສັ່ງຂອງພະອົງ
ພວກເຂົາຈຶ່ງພາກັນທູນລາພະອົງໄປ ເພື່ອໄປນັບເບິ່ງປະຊາຊົນ ອິສຣາເອນ.

[5]ພວກເຂົາຂ້າມແມ່ນ້ຳຢໍແດນ ໄປຕັ້ງຄ້າຍພັກຢູ່ທາງທິດໃຕ້ເມືອງ ອາໂຣເອ ຊຶ່ງເປັນເມືອງໜຶ່ງ
ຢູ່ໃນຮ່ອມພູ ໃນເຂດເມືອງ ຄາດ ແລ້ວພວກເຂົາກໍອອກຈາກທີ່ນັ້ນໄປທາງທິດເໜືອຈົນຮອດ
ເມືອງ ຢາເຊ. [6]ແລ້ວກໍອອກໄປຍັງເມືອງ ກີເລອາດ ເມືອງ ກາເດັດ ເຂດຊາວ ຮິດຕີ ຕໍ່ມາ ພວກ
ເຂົາກໍພາກັນໄປເມືອງ ດານ ເມື່ອອອກຈາກເມືອງ ດານ ກໍອ້ອມໄປທາງທິດຕາເວັນຕົກຮອດເມືອງ
ຊີໂດນ. [7]ແລ້ວພວກເຂົາໄດ້ໄປທາງທິດໃຕ້ຈົນຮອດເມືອງ ຕີເຣ ທີ່ມີປ້ອມຍາມອັນແໜ້ນໜາ
ແລະທົ່ວທຸກເມືອງຂອງຊາວ ຮີວີ ຊາວ ການາອານ ແລະໃນທີ່ສຸດກໍຮອດເມືອງ ເບເອ-ເຊບາ
ທາງພາກໃຕ້ຂອງ ຢູດາ. [8]ຫລັງຈາກໄດ້ເດີນທາງຜ່ານໄປທົ່ວທຸກຫົວເມືອງເປັນເວລາເກົ້າເດືອນ

ກັບຊາວມື້ແລ້ວ ພວກເຂົາກໍກັບຄືນເມືອນະຄອນ ເຢຣູຊາເລັມ.
9ພວກເຂົາໄດ້ລາຍງານຈຳນວນປະຊາຊົນຕໍ່ເຈົ້າຊີວິດວ່າ ໃນອິສຣາເອນມີທະຫານທີ່ເກັ່ງກ້າ
ແປດແສນຄົນ ແລະຢູ່ໃນຢູດາ ມີຫ້າແສນຄົນ.
10ແຕ່ວ່າ ພາຍຫລັງດາວິດສຳຫລວດສຳມະໂນຄົວປະຊາຊົນແລ້ວ ພະອົງກໍທຸກພະໄທຈຶ່ງທູນ
ຕໍ່ພຣະຜູ້ເປັນເຈົ້າວ່າ, “ຂ້ານ້ອຍໄດ້ເຮັດຜິດຢ່າງຮ້າຍແຮງໃນການນີ້ ຂໍພຣະອົງຊົງອະໄພໂທດ
ໃຫ້ຂ້ານ້ອຍດ້ວຍ ເພາະຂ້ານ້ອຍໄດ້ເຮັດເສື່ອມເສຍທີ່ສຸດ.”
11-12ຕໍ່ມາ ພຣະຜູ້ເປັນເຈົ້າຊົງກ່າວຕໍ່ຄາດ ຜູ້ປະກາດພຣະທຳ ຊຶ່ງເປັນຜູ້ທຳນວຍປະຈຳດາ-
ວິດວ່າ, “ຈົ່ງໄປບອກດາວິດວ່າ ເຮົາຈະສະເໜີໃຫ້ລາວເລືອກເອົາຢ່າງໜຶ່ງໃນສາມຢ່າງ ຖ້າ
ລາວເລືອກເອົາສິ່ງໃດແມ່ນສິ່ງນັ້ນທີ່ຈະເຮັດ” ດັ່ງນັ້ນ ເຊົ້າມື້ໃໝ່ມາ ຫລັງຈາກດາວິດລຸກແຕ່
ນອນແລ້ວ.
13ຄາດກໍໄປເຝົ້າພະອົງ ແລະບອກພະອົງຕາມຄຳທີ່ພຣະຜູ້ເປັນເຈົ້າຊົງກ່າວໄວ້ ແລ້ວຖາມ
ພະອົງວ່າ “ຈະໃຫ້ມີການອຶດອາຫານເກີດຂຶ້ນໃນແຜ່ນດິນຂອງພະອົງ ເປັນເວລາສາມປີບໍ? ຫລື
ຈະໃຫ້ພະອົງປົບໜີສັດຕູຂອງພະອົງເປັນເວລາສາມເດືອນບໍ? ຫລືຈະໃຫ້ໂຣກລະບາດເກີດຂຶ້ນ
ໃນປະເທດຂອງພະອົງເປັນເວລາສາມມື້ບໍ? ບັດນີ້ຂໍໃຫ້ພະອົງຄິດ ແລ້ວໃຫ້ຕອບແກ່ຂ້ານ້ອຍ
ເພື່ອຈະໄດ້ກັບຄືນໄປທູນພຣະຜູ້ເປັນເຈົ້າ.” 14ດາວິດໄດ້ຕອບວ່າ, “ເຮົາຍາກໃຈທີ່ສຸດ ແຕ່ເຮົາກໍ
ບໍ່ຕ້ອງການໃຫ້ມະນຸດລົງໂທດ ຂໍໃຫ້ພຣະຜູ້ເປັນເຈົ້າຊົງລົງໂທດພວກເຮົາເທີ້ນ ເພາະພຣະອົງ
ຊົງມີພຣະກະລຸນາ.”
15ດັ່ງນັ້ນ ພຣະຜູ້ເປັນເຈົ້າຈຶ່ງຊົງເຮັດໃຫ້ໂຣກລະບາດເກີດຂຶ້ນໃນອິສຣາເອນ ຕັ້ງແຕ່ເຊົ້າຈົນ
ຮອດເວລາຕາມທີ່ພຣະອົງຊົງກຳນົດໄວ້. 16ຊາວອິສຣາເອນທົ່ວປະເທດຕາຍເຈັດໝື່ນຄົນ ໃນ
ຂະນະທີ່ທູດຂອງພຣະຜູ້ເປັນເຈົ້າກຳລັງທຳລາຍນະຄອນເຢຣູຊາເລັມຢູ່ນັ້ນ ພຣະຜູ້ເປັນເຈົ້າກໍ
ຊົງປ່ຽນພຣະໄທ ບໍ່ລົງໂທດປະຊາຊົນ ພຣະອົງຈຶ່ງຊົງສັ່ງແກ່ທູດສະຫວັນທີ່ກຳລັງຂ້າພວກເຂົາຢູ່
ນັ້ນວ່າ, “ພໍແລ້ວ ເຊົາສາ” ທູດສະຫວັນໄດ້ຢູ່ໃກ້ລານຟາດເຂົ້າຂອງອະຣາວນາ ຄົນເຢບຸດ.
17ເມື່ອດາວິດເຫັນທູດສະຫວັນ ອົງທີ່ກຳລັງຂ້າປະຊາຊົນຢູ່ນັ້ນ ພະອົງກໍທູນຕໍ່ພຣະຜູ້ເປັນ-
ເຈົ້າວ່າ, “ຂ້ານ້ອຍເປັນຄົນອະທຳ ແມ່ນຂ້ານ້ອຍເອງເປັນຄົນຜິດ ຄົນທຸກຍາກເຫລົ່ານີ້ບໍ່ໄດ້ເຮັດ
ຜິດຫຍັງໝົດ ຂໍພຣະອົງຊົງລົງໂທດຂ້ານ້ອຍ ແລະຄອບຄົວຂອງຂ້ານ້ອຍສາ.”
18ໃນມື້ດຽວກັນນັ້ນ ຄາດໄດ້ໄປຫາດາວິດ ແລະທູນຕໍ່ພະອົງວ່າ, “ຂໍພະອົງຂຶ້ນໄປລານຟາດ
ເຂົ້າຂອງ ອະຣາວນາ ຄົນ ເຢບຸດ ແລ້ວສ້າງ ແທ່ນບູຊາຖວາຍ ແດ່ ພຣະຜູ້ເປັນເຈົ້າ ຢູ່ທີ່ນັ້ນ.”
19ດາວິດກໍເຊື່ອຟັງຄຳສັ່ງຂອງພຣະຜູ້ເປັນເຈົ້າ ພະອົງຈຶ່ງເດີນທາງໄປຕາມທີ່ຄາດໄດ້ທູນ.
20ເມື່ອອະຣາວນາຫລຽວລົງມາເຫັນເຈົ້າຊີວິດ ແລະພວກຂ້າລາຊະການຂອງພະອົງຂຶ້ນມາຫາ
ລາວ ລາວກໍກົ້ມຂາບລົງຕໍ່ໜ້າກະສັດດາວິດ. 21ແລະທູນຖາມວ່າ, “ຂ້າແດ່ພະອົງ ເປັນຫຍັງພະ
ອົງຈຶ່ງມາຢູ່ນີ້?” ດາວິດຕອບວ່າ, “ເຮົາມາຂໍຊື້ລານຟາດເຂົ້າຂອງເຈົ້າ ສ້າງແທ່ນບູຊາໃຫ້ແກ່
ພຣະຜູ້ເປັນເຈົ້າ ເພື່ອໃຫ້ໂຣກລະບາດນີ້ໝົດໄປ. 22ອະຣາວນາຈຶ່ງທູນວ່າ, “ຂ້າແດ່ພະອົງ ເຊີນ
ພະອົງເອົາໂລດ ແລະຖວາຍໃຫ້ແກ່ພຣະຜູ້ເປັນເຈົ້າຕາມທີ່ພະອົງຊົງຕ້ອງການ ນີ້ເດ ງົວສຳລັບ

ເຜົາຖວາຍບູຊາເທິງແທ່ນບູຊາ ແລະນີ້ແມ່ນແອກ ແລະໄມ້ຟາດເຂົ້າສຳລັບໃຊ້ເຮັດຟືນ.” [23]ອະ-
ຣາວນາໄດ້ມອບສິ່ງທັງໝົດນີ້ໃຫ້ແກ່ກະສັດດາວິດ ແລະເວົ້າຕໍ່ພະອົງວ່າ, “ຂໍໃຫ້ພຣະຜູ້ເປັນ-
ເຈົ້າຂອງພະອົງຊົງຮັບເອົາເຄື່ອງຖວາຍຂອງພະອົງເທີ້ນ.”

[24]ແຕ່ເຈົ້າຊີວິດກ່າວຕອບວ່າ, “ບໍ່ ເຮົາຈະຈ່າຍເງິນໃຫ້ເຈົ້າ ເຮົາຈະເອົາສິ່ງທີ່ບໍ່ໄດ້ຊື້ມາຖວາຍ
ບູຊາແກ່ພຣະຜູ້ເປັນເຈົ້າຂອງເຮົາບໍ່ໄດ້ ແລ້ວດາວິດກໍຊື້ລານຟາດເຂົ້າ ແລະງົວເຖິກເປັນເງິນ
ຫ້າສິບຫລຽນ. [25]ພະອົງໄດ້ສ້າງແທ່ນບູຊາຖວາຍແດ່ພຣະຜູ້ເປັນເຈົ້າຢູ່ທີ່ນີ້ ແລະໄດ້ຖວາຍ
ເຄື່ອງເຜົາບູຊາ ແລະການບູຊາເພື່ອຄວາມສາມັກຄີແກ່ພຣະຜູ້ເປັນເຈົ້າ ພຣະຜູ້ເປັນເຈົ້າກໍຊົງ
ຕອບຄຳອ້ອນວອນຂອງດາວິດ ໂຣກລະບາດໃນລາຊະອານາຈັກອິສຣາເອນຈຶ່ງໝົດໄປ.

* * *

# ປະຫວັດກະສັດ ສະບັບຕົ້ນ

## ບົດທີ 1

### ນາງອາບີຊາກ ບົວລະບັດຮັບໃຊ້ກະສັດດາວິດ

1ກະສັດ ດາວິດ ໄດ້ເຖົ້າແກ່ຫລາຍແລ້ວ ເຖິງແມ່ນວ່າຈະຫົ່ມຜ້າໃຫ້ພະອົງຫລາຍຜືນກໍຍັງບໍ່ອົບ
ອຸ່ນ. 2ດັ່ງນັ້ນ ບັນດາຂ້າລາຊະການຈຶ່ງກາບທູນພະອົງວ່າ, "ຂ້າແດ່ພະອົງ ຂໍຈົ່ງຊົງອະນຸຍາດ
ໃຫ້ພວກຂ້ານ້ອຍໄປຊອກຫາຍິງສາວ ມານອນແນບເອິກພະອົງ ເພື່ອພະອົງຈະໄດ້ຮັບຄວາມອົບ
ອຸ່ນຈາກນາງ." 3ຄັນຊອກຫາຍິງສາວທີ່ສວຍງາມທົ່ວທັງດິນແດນອິສຣາເອນແລ້ວ ພວກເຂົາຈຶ່ງ
ໄດ້ພົບນາງອາບີຊາກທີ່ເມືອງຊູເນມ ແລ້ວຈຶ່ງນຳເອົານາງເຂົ້າເຝົ້າພະລາຊາ. 4ເຖິງວ່າຍິງສາວ
ຜູ້ນີ້ເປັນຄົນງາມທີ່ສຸດ ແລະໄດ້ບົວລະບັດຮັບໃຊ້ພະລາຊາເປັນຢ່າງດີກໍຕາມ ແຕ່ພະອົງກໍບໍ່ໄດ້
ສົມສູ່ຢູ່ຮ່ວມກັບນາງເລີຍ.

### ອາໂດນີຢາຫາຊ່ອງທາງຂຶ້ນຄອງລາຊະສົມບັດ

5ຝ່າຍອາໂດນີຢາ ລາຊະໂອລົດຂອງພະນາງຮັກກິດນັ້ນ ເປັນຄົນເຈົ້າຊູ້ ແລະທະເຍີທະ-
ຍານຢາກເປັນເຈົ້າຊີວິດ ລາວເກີດນຳຫລັງອັບຊາໂລມ. 6ແລະກະສັດດາວິດບໍ່ເຄີຍໄດ້ຕຳໜິຕິ-
ຕຽນລາວໃນເລື່ອງໃດທັງໝົດ ອາໂດນີຢາ ໄດ້ຈັດຕຽມລົດມ້າ ແລະທະຫານຫ້າສິບຄົນຕິດຕາມ
ລາວໄປ. 7ລາວໄດ້ປຶກສາຫາລືກັບໂຢອາບ ລູກຊາຍຂອງນາງເຊຣູຢາ ແລະປະໂລຫິດອາບີ-
ອາທາ ທັງສອງຄົນນີ້ໄດ້ຕົກລົງສະໜັບສະໜູນ ອາໂດນີຢາ. 8ແຕ່ປະໂລຫິດຊາໂດກ ເບນາຢາ
ລູກຊາຍຂອງເຢໂຮຢາດາ ນາທານຜູ້ປະກາດພຣະຄຳ ຊີເມອີ ແລະເຣອີພ້ອມທັງທະຫານອາ-
ລັກຂາກະສັດດາວິດບໍ່ໄດ້ສະໜັບສະໜູນອາໂດນີຢາເລີຍ. 9ຢູ່ມາມື້ໜຶ່ງ ເມື່ອອາໂດນີຢາຖວາຍ
ແກະ ງົວ ແລະງົວນ້ອຍໂຕອ້ວນພີເປັນເຄື່ອງບູຊາຢູ່ກ້ອນຫີນງູໃກ້ກັບບໍ່ນ້ຳເອັນ-ໂຣເກນ ລາວ
ໄດ້ເຊີນພວກນ້ອງທຸກຄົນ ແລະພວກຂ້າລາຊະການຂອງກະສັດດາວິດທີ່ມາຈາກຢູດາມາຮ່ວມ
ສະເຫລີມສະຫລອງນຳ. 10ແຕ່ລາວບໍ່ໄດ້ເຊີນໂຊໂລໂມນນ້ອງຊາຍຂອງລາວ ນາທານຜູ້ປະ-
ກາດພຣະຄຳ ເບນາຢາທະຫານອາລັກຂາຂອງກະສັດດາວິດມາຮ່ວມນຳ.

### ນາທານ ແລະພະນາງບັດເຊບາເຂົ້າກາບທູນພະລາຊາ

11ແລ້ວນາທານໄດ້ທູນພະນາງບັດເຊບາ ພະມານດາຂອງໂຊໂລໂມນວ່າ, "ພະນາງບໍ່ຮູ້ບໍວ່າ
ອາໂດນີຢາ ລາຊະໂອລົດຂອງພະນາງຮັກກິດໄດ້ປະກາດຕົວເອງຂຶ້ນເປັນເຈົ້າຊີວິດ ແລະກະ-
ສັດດາວິດກໍບໍ່ຮູ້ຈັກໃນເລື່ອງນີ້ເລີຍ. 12ຖ້າວ່າ ພະນາງຢາກຊ່ອຍຊີວິດຂອງຕົນເອງ ແລະຊີວິດ
ຂອງເຈົ້າໂຊໂລໂມນ ລາຊະໂອລົດຂອງພະນາງແລ້ວ ຂ້ານ້ອຍຂໍອອກຄວາມຄິດຄວາມເຫັນໃຫ້
ພະນາງປະຕິບັດດັ່ງນີ້. 13ຂໍພະນາງສະເດັດໄປທູນກະສັດດາວິດວ່າ, ຂ້າແດ່ພະລາຊາ ບໍ່ແມ່ນ
ພະອົງເອງບໍ ທີ່ສັນຍາຢ່າງເດັດດ່ຽວກັບຂ້ານ້ອຍວ່າ ໂຊໂລໂມນລູກຊາຍຂອງຂ້ານ້ອຍຈະເປັນ
ເຈົ້າຊີວິດແທນພະອົງ ແລະເປັນຫຍັງອາໂດນີຢາຈຶ່ງຂຶ້ນເປັນເຈົ້າຊີວິດ?" 14ແລະນາທານເວົ້າຕໍ່
ໄປອີກວ່າ, "ໃນຂະນະທີ່ພະນາງກຳລັງເວົ້າກັບເຈົ້າຊີວິດຢູ່ນັ້ນ ຂ້ານ້ອຍຈະຕາມພະນາງເຂົ້າໄປ

ແລະຈະຢືນຢັນຄຳທີ່ພະນາງເວົ້າ.”
15ດັ່ງນັ້ນ ບັດເຊບາຈຶ່ງໄປເຝົ້າພະລາຊາຢູ່ໃນຫ້ອງບັນທົມ ພະອົງຊົງເຖົ້າແກ່ຫລາຍແລ້ວ
ແລະນາງອາບີຊາກຄົນຊູເນມ ກໍຄອຍຮັບໃຊ້ພະອົງຢູ່ທີ່ນັ້ນ. 16ນາງບັດເຊບາຊຸເຂົ່າລົງສະແດງ
ຄວາມຈົ່ງຮັກພັກດີ ແລ້ວພະອົງຈຶ່ງຊົງຖາມວ່າ, “ເຈົ້າຕ້ອງການສິ່ງໃດ?” 17ພະນາງຈຶ່ງທູນຕອບ
ວ່າ, “ພະລາຊາຂອງຂ້ານ້ອຍ ພະອົງໄດ້ຊົງສັນຍາຢ່າງເດັດດ່ຽວໃນພຣະນາມຂອງພຣະຜູ້ເປັນ-
ເຈົ້າວ່າ ໂຊໂລໂມນ ລູກຊາຍຂອງຂ້ານ້ອຍຈະເປັນເຈົ້າຊີວິດແທນພະອົງ. 18ແຕ່ດຽວນີ້ ອາໂດ-
ນີຢາເປັນເຈົ້າຊີວິດແລ້ວ ສ່ວນພະອົງກໍບໍ່ຮູ້ຈັກເລື່ອງນີ້ເລີຍ. 19ລາວໄດ້ຖວາຍບູຊາງົວຫລາຍໂຕ
ປະໂລຫິດອາບີອາທາ ແລະໂຢອາບຜູ້ບັນຊາການກອງທັບມາຮ່ວມ ແຕ່ລາວບໍ່ໄດ້ເຊີນໂຊໂລ-
ໂມນລູກຊາຍຂອງພະອົງເລີຍ. 20ຂ້າແດ່ພະລາຊາຂອງຂ້ານ້ອຍ ດຽວນີ້ ຊາວອິສຣາເອນທຸກ
ຄົນໄດ້ຊອມເບິ່ງພະອົງ ເພື່ອຢາກຮູ້ວ່າ ພະອົງຈະໃຫ້ຜູ້ໃດຂຶ້ນນັ່ງພະລາຊະບັນລັງແທນພະອົງ.
21ຖ້າພະອົງບໍ່ປະຕິບັດໃນເລື່ອງນີ້ ເມື່ອພະອົງສະຫວັນນະຄົດໄປຢູ່ນຳພວກປູ່ຍ່າຕາຍາຍຂອງພະ
ອົງແລ້ວ ຂ້ານ້ອຍແລະລູກຊາຍໂຊໂລໂມນຈະຕ້ອງທົນທຸກທໍລະມານ.”
22-23ໃນເວລາທີ່ພະນາງບັດເຊບາກຳລັງເວົ້າຢູ່ນັ້ນ ກໍມີຄົນມາລາຍງານຕໍ່ເຈົ້າຊີວິດວ່າ ນາ-
ທານຜູ້ປະກາດພຣະຄຳເຂົ້າມາເຝົ້າ ນາທານກໍເຂົ້າໄປຂ້າງໃນ ແລະຂາບລົງຕໍ່ພະພັກເຈົ້າຊີວິດ.
24ແລ້ວກາບທູນວ່າ, “ຂ້າແດ່ພະລາຊາຂອງຂ້ານ້ອຍ ພະອົງໄດ້ຊົງບັນຊາວ່າ ອາໂດນີຢາຈະຂຶ້ນ
ຄອງລາຊະສົມບັດແທນພະອົງ ແມ່ນບໍ? 25ເພາະວ່າ ໃນມື້ນີ້ລາວໄດ້ລົງໄປຖວາຍບູຊາງົວ
ແລະແກະ ງົວນ້ອຍໂຕອ້ວນພີຈຳນວນຫລາຍໂຕ ລາວໄດ້ເຊີນພວກລາຊະໂອລົດຂອງພຣະອົງ
ໂຢອາບຜູ້ບັນຊາການທະຫານຂອງພະອົງ ແລະປະໂລຫິດອາບີອາທາໄປຮ່ວມນຳ ດຽວນີ້
ພວກເຫລົ່ານັ້ນກຳລັງກິນ ແລະດື່ມຢູ່ກັບລາວ ທັງພາກັນຮ້ອງຂຶ້ນວ່າ, “ຂໍໃຫ້ເຈົ້າຊີວິດອາໂດນີ-
ຢາຈົ່ງຊົງພະຈະເລີນ.” 26ແຕ່ລາວບໍ່ໄດ້ເຊີນຂ້ານ້ອຍ ປະໂລຫິດຊາໂດກ ເບນາຢາແລະໂຊໂລ-
ໂມນເລີຍ ເລື່ອງນີ້ແມ່ນພະອົງໄດ້ເຫັນດີນຳບໍ? 27ພະອົງບໍ່ໄດ້ບອກພວກບັນດາຂ້າລາຊະການ
ຂອງພະອົງຮູ້ນຳບໍວ່າ ໃຜຈະຂຶ້ນຄອງພະລາຊະບັນລັງແທນພະອົງ?”

## ກະສັດດາວິດແຕ່ງຕັ້ງໂຊໂລໂມນເປັນຜູ້ປົກຄອງລາຊະສົມບັດ

28ແລ້ວກະສັດດາວິດ ບອກໃຫ້ພວກເຂົາເອີ້ນພະນາງບັດເຊບາເຂົ້າມາຫາພະອົງ ນາງຈຶ່ງ
ເຂົ້າເຝົ້າ ແລະຢືນຢູ່ຊ້ອງພະພັກພະອົງ. 29ເຈົ້າຊີວິດຈຶ່ງຊົງກ່າວຕໍ່ນາງວ່າ, “ເຮົາຂໍສັນຍາໃນ
ພຣະນາມຂອງພຣະຜູ້ເປັນເຈົ້າຜູ້ຊົງພຣະຊົນຢູ່ ຜູ້ຊົງໄຖ່ເຮົາອອກຈາກຄວາມທຸກລຳບາກທັງ
ປວງ. 30ວ່າມື້ນີ້ ເຮົາຂໍເຮັດຕາມຄຳສັນຍາທີ່ເຮົາໄດ້ມີຕໍ່ເຈົ້າ ໃນພຣະນາມພຣະຜູ້ເປັນເຈົ້າຂອງ
ຊາວອິສຣາເອນວ່າ ໂຊໂລໂມນລູກຊາຍຂອງເຈົ້າຈະຕ້ອງໄດ້ເປັນເຈົ້າຊີວິດ.” 31ພະນາງບັດເຊ-
ບາ ຊຸເຂົ່າກົ້ມຂາບລົງ ຖວາຍຄວາມຈົ່ງຮັກພັກດີຕໍ່ເຈົ້າຊີວິດ ແລະກ່າວວ່າ, “ຂໍໃຫ້ກະສັດດາ-
ວິດຂອງຂ້ານ້ອຍຈົ່ງຊົງພະຈະເລີນ.”
32ແລ້ວກະສັດດາວິດຊົງອອກຄຳສັ່ງວ່າ, “ຈົ່ງເອີ້ນປະໂລຫິດຊາໂດກ ນາທານຜູ້ປະກາດ
ພຣະຄຳ ແລະເບນາຢາ ມາຫາເຮົາ” ພວກເຂົາເຫລົ່ານີ້ກໍເຂົ້າເຝົ້າເຈົ້າຊີວິດ. 33ພະອົງຊົງກ່າວ
ວ່າ, “ຈົ່ງເອົາບັນດາທະຫານປະຈຳພະລາຊະວັງໄປນຳພວກເຈົ້າ ແລ້ວໃຫ້ລູກຊາຍໂຊໂລໂມນຂີ່

ລໍຂອງເຮົາ ພວກເຈົ້າຈົ່ງແຫ່ແຫນຕາມລາວໄປຫາບໍ່ນ້ຳກີໂຮນ. 34ໃນທີ່ນັ້ນໃຫ້ປະໂລຫິດຊາໂດກ
ແລະຜູ້ປະກາດພະຄຳນາທານ ເອົານ້ຳມັນຫົດສົງ ແລະແຕ່ງຕັ້ງລາວໃຫ້ເປັນເຈົ້າຊີວິດແຫ່ງອິ-
ສຣາເອນ ແລ້ວຈົ່ງເປົ່າແກ ແລະຮ້ອງຂຶ້ນວ່າ, "ກະສັດໂຊໂລໂມນຈົ່ງຊົງພະຈະເລີນ." 35ເມື່ອ
ແລ້ວໆ ພວກເຈົ້າຈົ່ງນຳລາວຂຶ້ນມານັ່ງເທິງບັນລັງ ໃຫ້ເປັນເຈົ້າຊີວິດແທນເຮົາ ເພາະວ່າລາວ
ເປັນຜູ້ທີ່ເຮົາໄດ້ແຕ່ງຕັ້ງໃຫ້ເປັນຜູ້ປົກຄອງອິສຣາເອນ ແລະຢູດາ. 36ເບນາຢາຈຶ່ງກ່າວທູນວ່າ,
"ຂໍໃຫ້ເປັນໄປດັ່ງນີ້ເຖີດ ຂໍໃຫ້ພຣະຜູ້ເປັນເຈົ້າຊົງເຫັນດີນຳໃນເລື່ອງນີ້. 37ພຣະຜູ້ເປັນເຈົ້າຊົງ
ສະຖິດຢູ່ກັບພະລາຊາຂອງຂ້ານ້ອຍຢ່າງໃດ ຂໍພຣະອົງຊົງສະຖິດຢູ່ກັບໂຊໂລໂມນຢ່າງນັ້ນ
ແລະຂໍໃຫ້ບັນລັງຂອງໂຊໂລໂມນ ຍິ່ງໃຫຍ່ກວ່າລາຊະບັນລັງຂອງພະອົງເທີ້ນ.

38ຕໍ່ມາ ປະໂລຫິດຊາໂດກ ແລະນາທານຜູ້ປະກາດພະຄຳ ແລະເບນາຢາລູກຊາຍຂອງເຢ-
ໂຮຢາດາ ພ້ອມທັງຄົນເກເຣັດ ຄົນເປເລດ ກໍຈັດໃຫ້ໂຊໂລໂມນຂຶ້ນນັ່ງເທິງຫລັງລໍຂອງກະສັດ
ດາວິດ ແລ້ວພາກັນແຫ່ຕິດຕາມເພິ່ນລົງໄປໃນບໍ່ນ້ຳກີໂຮນ. 39ປະໂລຫິດຊາໂດກເອົານ້ຳມັນມາ
ຈາກຜ້າເຕັນສັກສິດແລ້ວຫົດສົງໂຊໂລໂມນ ເມື່ອສຽງແກດັງ ປະຊາຊົນທຸກຄົນກໍຮ້ອງຂຶ້ນວ່າ,
"ຂໍໃຫ້ກະສັດໂຊໂລໂມນຈົ່ງຊົງພະຈະເລີນ." 40ແລ້ວປະຊາຊົນກໍແຫ່ພະອົງຂຶ້ນມາ ພ້ອມທັງເປົ່າ
ປີ່ຢ່າງມ່ວນຊື່ນ ແລະຮ້ອງໂຮດັງກ້ອງກັງວານຈົນແຜ່ນດິນສັ່ນສະເທືອນ.

41ໃນຂະນະທີ່ອາໂດນີຢາ ພ້ອມທັງແຂກທີ່ຖືກເຊີນມາກຳລັງກິນເຂົ້າແລ້ວ ທຸກຄົນກໍໄດ້ຍິນ
ສຽງດັງ ພໍເມື່ອໂຢອາບໄດ້ຍິນສຽງເປົ່າແກ ລາວຈຶ່ງຖາມຂຶ້ນວ່າ, "ສຽງທີ່ອຶກກະທຶກຄຶກໂຄມຢູ່
ໃນເມືອງນັ້ນແມ່ນສຽງຫຍັງກັນ? 42ໃນເວລາທີ່ລາວກຳລັງເວົ້າຢູ່ນັ້ນ ໂຢນາທານລູກຊາຍຂອງ
ປະໂລຫິດອາບີອາທາກໍມາຮອດ ອາໂດນີຢາຈຶ່ງເວົ້າວ່າ, "ເຈົ້າເປັນຄົນດີ ເຈົ້າຄົງນຳຂ່າວດີມາ
ໃຫ້ຂ້ອຍແມ່ນບໍ?" 43ໂຢນາທານທູນຕອບວ່າ, "ມັນບໍ່ເປັນດັ່ງນັ້ນຂ້ານ້ອຍ ກະສັດດາວິດໄດ້
ແຕ່ງຕັ້ງໂຊໂລໂມນເປັນເຈົ້າຊີວິດແລ້ວ. 44ພະອົງຊົງສັ່ງປະໂລຫິດຊາໂດກ ນາທານ ເບນາຢາ
ແລະຄົນເກເຣັດ ຄົນເປເລດ ແລະພວກນີ້ໄດ້ໃຫ້ໂຊໂລໂມນ ຂຶ້ນນັ່ງເທິງຫລັງລໍຂອງກະສັດ
ດາວິດ. 45ຊາໂດກ ແລະນາທານໄດ້ເອົານ້ຳມັນຫົດສົງເພິ່ນໃຫ້ເປັນເຈົ້າຊີວິດຢູ່ທີ່ບໍ່ນ້ຳກີໂຮນ
ແລ້ວທຸກຄົນໄດ້ຄືນສູ່ພະລາຊະວັງດ້ວຍສຽງຮ້ອງໂຮຢ່າງມ່ວນຊື່ນ ດຽວນີ້ ຢູ່ໃນເມືອງກຳລັງອຶກ-
ກະທຶກຄຶກໂຄມ ກໍແມ່ນສຽງທີ່ພະອົງຊົງໄດ້ຍິນນັ້ນແຫລະ. 46ດຽວນີ້ໂຊໂລໂມນຊົງນັ່ງເທິງພະ
ລາຊະບັນລັງແລ້ວ. 47ແລະບັນດາຂ້າລາຊະການຂອງກະສັດດາວິດ ຍັງໄດ້ຖວາຍພຣະພອນ
ແດ່ກະສັດດາວິດວ່າ, "ຂໍພຣະເຈົ້າຊົງເຮັດໃຫ້ນາມຂອງໂຊໂລໂມນມີສະຫງ່າລາສີຫລາຍກວ່າ
ພະນາມຂອງເຈົ້າຊີວິດ ແລະຂໍໃຫ້ບັນລັງຂອງໂຊໂລໂມນສູງສົ່ງເໜືອກວ່າບັນລັງຂອງພະອົງ"
ແລ້ວກະສັດດາວິດກໍກົ້ມຂາບລົງເທິງຕຽງນອນຂອງພະອົງ. 48ແລະຊົງອ້ອນວອນວ່າ, "ສາທຸ-
ການແດ່ ພຣະຜູ້ເປັນເຈົ້າ ຜູ້ຊົງເປັນພຣະເຈົ້າຂອງອິສຣາເອນ ເພາະໃນມື້ນີ້ ພຣະອົງຊົງໂຜດ
ຜູ້ໜຶ່ງໃນເຊື້ອສາຍຂອງຂ້ານ້ອຍຂຶ້ນນັ່ງເທິງບັນລັງ ແລະຊົງໃຫ້ຂ້ານ້ອຍມີຊີວິດຢູ່ຈົນໄດ້ເຫັນກັບ
ຕາ."

49ເມື່ອໄດ້ຍິນດັ່ງນັ້ນ ແຂກທີ່ຮັບເຊີນທຸກຄົນຂອງອາໂດນີຢາກໍຢ້ານສັ່ນ ຕ່າງຄົນໄດ້ລຸກຂຶ້ນ
ແລະແຕກໜີໄປຕາມທາງໃຜລາວ. 50ສ່ວນອາໂດນີຢາ ກໍຢ້ານໂຊໂລໂມນເຊັ່ນດຽວກັນ. 51ລາວ

ໄດ້ແລ່ນໜີໄປຈັບແທ່ນບູຊາ ແລ້ວມີຄົນມາກາບທູນໂຊໂລໂມນວ່າ ດຽວນີ້ ອາໂດນີຢາຢ້ານກົວ
ພະອົງ ແລະລາວກຳລັງຈັບແຈແທ່ນບູຊາທັງເວົ້າວ່າ, "ກ່ອນອື່ນໃດ ຂໍໃຫ້ເຈົ້າຊີວິດໂຊໂລໂມນ
ຊົງສາບານກັບຂ້ານ້ອຍວ່າ ພະອົງຈະບໍ່ປະຫານຊີວິດຂ້ານ້ອຍ." 52ໂຊໂລໂມນຈຶ່ງຕອບວ່າ,
"ຖ້າວ່າລາວສະແດງຕົວໄດ້ວ່າລາວເປັນຄົນສັດຊື່ແທ້ ແມ່ນແຕ່ຜົມເສັ້ນໜຶ່ງຂອງລາວກໍຈະບໍ່ຖືກ
ແຕະຕ້ອງ ແຕ່ຖ້າລາວຍັງຄິດຜູກພະຍາບາດຢູ່ ລາວຈະຕ້ອງຕາຍ." 53ແລ້ວເຈົ້າຊີວິດ ໂຊໂລ-
ໂມນກໍສົ່ງຄົນໄປນຳລາວມາຈາກແທ່ນບູຊາ ເມື່ອອາໂດນີຢາມາຮອດ ລາວກໍກົ້ມຂາບໂຊໂລ-
ໂມນ ໂຊໂລໂມນຈຶ່ງກ່າວຕໍ່ລາວວ່າ, "ເຈົ້າຈົ່ງກັບຄືນເມືອທຳໂຮງຂອງເຈົ້າສາ."

# ບົດທີ 2

## ກະສັດດາວິດຊົງມອບໜ້າທີ່ໃຫ້ໂຊໂລໂມນ

1ເມື່ອກະສັດດາວິດໃກ້ຈະສິ້ນພະຊົນແລ້ວ ພະອົງຈຶ່ງຊົງຮັບສັ່ງໃຫ້ໂຊໂລໂມນເຂົ້າເຝົ້າ ແລະ
ສັ່ງສອນວ່າ, 2"ຄວາມຕາຍຂອງພໍ່ໄດ້ມາຮອດແລ້ວ ລູກຈົ່ງເຂັ້ມແຂງແລະໝັ້ນໃຈໃນຕົວເອງ ຈົ່ງ
ປະຕິບັດຕາມທີ່ພຣະຜູ້ເປັນເຈົ້າຂອງລູກຊົງສັ່ງໃຫ້ເຮັດນັ້ນ. 3ຈົ່ງເຊື່ອຟັງພຣະບັນຍັດ ແລະ
ພຣະຄຳສັ່ງຂອງພຣະອົງ ຕາມທີ່ໄດ້ບັນທຶກໄວ້ໃນພຣະຄຳຂອງໂມເຊ ເພື່ອວ່າເຈົ້າຈະສຳເລັດ
ຜົນໃນທຸກສິ່ງທີ່ເຈົ້າເຮັດ ແລະໃນທຸກບ່ອນທີ່ເຈົ້າໄປ. 4ຖ້າວ່າລູກປະຕິບັດຕາມ ພຣະຜູ້ເປັນເຈົ້າ
ຈະຊົງຮັກສາຄຳສັນຍາທີ່ພຣະອົງໃຫ້ໄວ້ກັບພໍ່ວ່າ, "ຖ້າລູກຊາຍທັງຫລາຍຂອງເຈົ້າປະພຶດຕາມ
ຄຳສັ່ງສອນຂອງເຮົາ ແລະດຳເນີນຊີວິດຢ່າງສັດຊື່ຕໍ່ໜ້າເຮົາດ້ວຍຄວາມສຸດຈິດສຸດໃຈ ພວກເຂົາ
ກໍຈະໄດ້ປົກຄອງອິສຣາເອນເປັນເວລາຍາວນານ."

5ເຈົ້າກໍຮູ້ແລ້ວວ່າ ໂຢອາບປະຕິບັດຕໍ່ພໍ່ຢ່າງໃດ ລາວໄດ້ຂ້າຜູ້ບັນຊາການຂອງອິສຣາເອນ
ສອງຄົນ ຄື ອັບເນລູກຊາຍຂອງເນ ອາມາສາລູກຊາຍຂອງເຢເທ ໂດຍໄດ້ແກ້ແຄ້ນພວກເຂົາ
ໃນເວລາທີ່ບໍ່ມີເສິກເສືອ ເພື່ອແກ້ແຄ້ນຕາງຍາດພີ່ນ້ອງທີ່ຕາຍໃນສະໜາມຮົບ ລາວໄດ້ຂ້າຜູ້ທີ່ບໍ່
ມີຄວາມຜິດ ພໍ່ຕ້ອງຮັບຜິດຊອບຢ່າງໜັກຕໍ່ການກະທຳຂອງລາວ. 6ລູກຄົງຮູ້ຈັກດີວ່າລູກຈະຕ້ອງ
ເຮັດຢ່າງໃດ ລູກຄົງບໍ່ປ່ອຍໃຫ້ລາວຕາຍຢ່າງສະຫງົບສຸກ.

7ຝ່າຍພວກລູກຊາຍຂອງບາຊີລາຍ ຊາຍກີເລອາດ ຈົ່ງລ້ຽງດູພວກເຂົາດ້ວຍຄວາມເມດຕາ
ປານີ ຈົ່ງອະນຸຍາດໃຫ້ພວກເຂົາກິນເຂົ້າຮ່ວມໂຕະກັບລູກ ເພາະພວກເຂົາເຮັດດີຕໍ່ພໍ່ ຕອນພໍ່ປົບ
ໜີຈາກອັບຊາໂລມອ້າຍຂອງເຈົ້າ.

8ແລະຊີເມອີລູກຊາຍຂອງເກຣາ ຊາວເບັນຢາມິນທີ່ມາຈາກບາຮູຣິມ ລາວໄດ້ຮ້ອງດ່າສາບ
ແຊ່ງພໍ່ຢ່າງໃຫຍ່ ເມື່ອພໍ່ໄດ້ໄປເມືອງມາຮານາຢິມ ແຕ່ຕອນພໍ່ກັບມາ ລາວໄດ້ລົງມາຕ້ອນຮັບພໍ່
ທີ່ແມ່ນໍ້າຢໍແດນ ພໍ່ຈຶ່ງໄດ້ສາບານໃນພຣະນາມພຣະຜູ້ເປັນເຈົ້າວ່າ ພໍ່ຈະບໍ່ຂ້າລາວ. 9ແຕ່ເຈົ້າ
ຄົງຮູ້ຈັກວ່າ ເຈົ້າຈະຕ້ອງເຮັດຢ່າງໃດ ເຈົ້າຈົ່ງຂ້າລາວເສຍ."

## ດາວິດສິ້ນພະຊົນ

10ແລ້ວກະສັດດາວິດກໍສິ້ນລົມຫາຍໃຈ ພວກເຂົາຝັງສົບຂອງພະອົງໄວ້ຢູ່ນະຄອນເຢຣູຊາ-
ເລັມ. 11ກະສັດດາວິດໄດ້ປົກຄອງລາຊະອານາຈັກອິສຣາເອນເປັນເວລາສີ່ສິບປີ ຄືພະອົງປະ-

ທັບທີ່ເມືອງ ເຮັບໂຣນ ເຈັດປີ ແລະປະທັບທີ່ ເຢຣູຊາເລັມ ສາມສິບສາມປີ.

[12]ໂຊໂລໂມນ ໄດ້ປະທັບ ເທິງພະລາຊະບັນລັງຂອງກະສັດ ດາວິດ ແລະພະລາຊະອຳນາດ
ຂອງພະອົງກໍດຳລົງຢູ່ຢ່າງໝັ້ນຄົງຖາວອນ.

[13]ແລ້ວ ອາໂດນີຢາ ລູກຊາຍ ຂອງ ນາງ ຮັກກິດ ໄດ້ ເຂົ້າ ເຝົ້າຍານາງ ບັດເຊບາ ແມ່ຂອງ ໂຊໂລ-
ໂມນ ຍານາງໄດ້ຖາມ ລາວວ່າ "ເຈົ້າມາຢ່າງສັນຕິບໍ?" ລາວຕອບວ່າ "ຂ້ອຍມາຢ່າງສັນຕິ"
[14]ແລ້ວລາວທູນວ່າ "ຂ້ອຍມີເລື່ອງທີ່ຈະເວົ້າແກ່ຍານາງ" ຍານາງໄດ້ເວົ້າວ່າ "ຈົ່ງເວົ້າມາໂລດ"
[15]ແລ້ວລາວຈຶ່ງທູນວ່າ "ຍານາງຮູ້ແລ້ວວ່າລາຊະອານາຈັກນັ້ນເປັນຂອງຂ້ານ້ອຍ ແລະບັນດາ
ຊົນຊາດ ອິສຣາເອນ ທັງໝົດກໍໝາຍໃຈວ່າຂ້າພະເຈົ້າຈະໄດ້ປົກຄອງລາຊະອານາຈັກ; ຢ່າງໃດ
ກໍດີ ລາຊະອານາຈັກໄດ້ກາຍມາເປັນຂອງນ້ອງຊາຍຂອງຂ້ານ້ອຍ ດ້ວຍວ່າລາຊະອານາຈັກເປັນ
ຂອງຍານາງຊຶ່ງມາຈາກ ພຣະຜູ້ເປັນເຈົ້າ [16]ບັດນີ້ຂ້ານ້ອຍທູນຂໍແຕ່ສິ່ງດຽວ ຂໍທ່ານຢ່າໄດ້ປະຕິ-
ເສດເລີຍ" ຍານາງໄດ້ເວົ້າຕໍ່ລາວວ່າ "ຈົ່ງເວົ້າມາເບິ່ງ" [17]ແລະລາວກໍທູນວ່າ "ຂໍຍານາງທູນກະ-
ສັດ ໂຊໂລໂມນ (ເພິ່ນຄົງບໍ່ປະຕິເສດທ່ານ) ຄື ທູນຂໍອາບີຊາກ ຊາວຊູເນມ ໃຫ້ເປັນເມຍຂອງ
ຂ້ານ້ອຍ" [18]ຍານາງ ບັດເຊບາ ໄດ້ກ່າວວ່າ "ດີແລ້ວ ເຮົາຈະທູນກະສັດແທນເຈົ້າ."

[19]ຍານາງ ບັດເຊບາ ຈຶ່ງເຂົ້າເຝົ້າກະສັດ ໂຊໂລໂມນ ເພື່ອທູນໃຫ້ອາໂດນີຢາ ແລະກະສັດໄດ້
ລຸກຂຶ້ນຕ້ອນຮັບນາງ ແລະໄດ້ຄຳນັບພະນາງ ແລ້ວກໍສະເດັດປະທັບ ເທິງພະທີ່ນັ່ງຂອງພະອົງ
ຮັບສັ່ງໃຫ້ນຳພະທີ່ນັ່ງມາຖວາຍສຳລັບແມ່ຂອງກະສັດ ແລະນາງກໍໄດ້ນັ່ງທີ່ເບື້ອງຂວາຂອງກະ-
ສັດ [20]ແລ້ວຍານາງທູນວ່າ "ແມ່ຈະຂໍຈາກເຈົ້າຈັກປະການໜຶ່ງ ຂໍຢ່າປະຕິເສດແມ່ເລີຍ" ແລະ
ກະສັດທູນຍານາງວ່າ "ຂໍມາເຖີດ ຂ້ອຍຈະບໍ່ປະຕິເສດແມ່ດອກ" [21]ຍານາງທູນວ່າ "ຂໍຍົກນາງ
ອາບີຊາກ ຊາວ ຊູເນມ ໃຫ້ເປັນ ເມຍຂອງ ອາໂດນີຢາ ອ້າຍຂອງ ເຈົ້າສາ" [22]ກະສັດ ໂຊໂລໂມນ
ກ່າວຕອບແມ່ຂອງເພິ່ນວ່າ "ເຫດໃດແມ່ຈຶ່ງມາຂໍ ອາບີຊາກ ຊາວຊູເນມ ໃຫ້ແກ່ອາໂດນີຢາ? ໜ້າ
ຈະຂໍລາຊະອານາຈັກໃຫ້ລາວ ເພາະລາວເປັນອ້າຍຂອງລູກ ແລະຝ່າຍລາວມີປະໂລຫິດ ອາບີ-
ອາທາ ແລະ ໂຢອາບ ລູກນາງ ເຊຣູຢາ ແລ້ວ."

[23]ແລ້ວກະສັດ ໂຊໂລໂມນ ໄດ້ສາບານໃນພຣະນາມຂອງ ພຣະຜູ້ເປັນເຈົ້າວ່າ "ຖ້າ ອາໂດນີຢາ
ບໍ່ໄດ້ ເວົ້າຖ້ອຍຄຳນີ້ຕໍ່ສູ້ຊີວິດຂອງລາວ ເອງ ແລ້ວ ກໍຂໍ ພຣະເຈົ້າ ໄດ້ລົງໂທດຂ້ອຍ ແລະໜັກ
ຫລາຍໄປກວ່ານັ້ນອີກ [24]ເພາະສະນັ້ນ, ບັດນີ້ ພຣະຜູ້ເປັນເຈົ້າ ຊົງພຣະຊົນຢູ່ແທ້ສັນໃດ ພຣະອົງ
ຜູ້ສະຖາປະນາຂ້ອຍໄວ້ ແລະຕັ້ງຂ້ອຍໄວ້ເທິງບັນລັງຂອງ ດາວິດ ພໍ່ຂອງຂ້ອຍ ແລະໄດ້ຕັ້ງໄວ້
ເປັນຄອບຄົວ ດັ່ງທີ່ພຣະອົງໄດ້ສັນຍາໄວ້ ອາໂດນີຢາ ຈະຕ້ອງຕາຍໃນມື້ນີ້ ສັນນັ້ນ" [25]ດັ່ງນັ້ນ
ກະສັດ ໂຊໂລໂມນ ຈຶ່ງຮັບສັ່ງໃຊ້ ເບນາຢາ ລູກຊາຍ ເຢໂຮຢາດາ, ລາວກໍໄປປະຫານຊີວິດຂອງ
ອາໂດນີຢາ ແລະ ອາໂດນີຢາກໍຕາຍ.

## ອາບີອາທາຖືກໄລ່ອອກຈາກໜ້າທີ່ປະໂລຫິດ

[26]ສ່ວນປະໂລຫິດ ອາບີອາທາ ນັ້ນ ກະສັດອອກຄຳສັ່ງວ່າ "ຈົ່ງໄປນາຂອງເຈົ້າທີ່ຢູ່ອານາໂທດ
ເພາະເຈົ້າ ສົມຄວນຖືກໂທດເຖິງຕາຍ ແຕ່ໃນເວລານີ້ເຮົາຈະບໍ່ປະຫານຊີວິດເຈົ້າ ເພາະວ່າເຈົ້າ
ຫາມຫີບຄຳສັນຍາຂອງອົງ ພຣະຜູ້ເປັນເຈົ້າ ໄປຂ້າງໜ້າ ດາວິດ ພໍ່ຂອງເຮົາ ແລະຍ້ອນເຈົ້າໄດ້ເຂົ້າ

ສ່ວນໃນບັນດາຄວາມທຸກໃຈຂອງພໍ່ເຮົາທຸກຂໍ້” [27]ແລະ ໂຊໂລໂມນ ຈຶ່ງໄດ້ຂັບໄລ່ ອາບີອາທາ ອອກ
ຈາກໜ້າທີ່ປະໂລຫິດຂອງ ພຣະຜູ້ເປັນເຈົ້າ ເພື່ອໃຫ້ພຣະຄຳຂອງ ພຣະຜູ້ເປັນເຈົ້າ ສຳເລັດຕາມທີ່
ພຣະອົງໄດ້ກ່າວກ່ຽວກັບເຊື້ອສາຍຂອງ ເອລີ ທີ່ເມືອງ ຊີໂລ.

## ໂຢອາບຖືກປະຫານຊີວິດ ເພາະເພິ່ນຂ້າອັບເນ

[28]ເມື່ອຂ່າວນີ້ຮູ້ໄປເຖິງ ໂຢອາບ ເພາະວ່າ ໂຢອາບ ບໍ່ໄດ້ສະໜັບສະໜູນ ອັບຊາໂລມ ເພິ່ນໄດ້
ສະໜັບສະໜູນ ອາໂດນີຢາ ໂຢອາບ ກໍປົບໜີໄປທີ່ຫໍເຕັນຂອງ ພຣະຜູ້ເປັນເຈົ້າ ແລະຈັບຈອມ
ແທ່ນບູຊາໄວ້ [29]ເມື່ອມີຄົນໄປກາບທູນກະສັດ ໂຊໂລໂມນ ວ່າ “ໂຢອາບ ໄດ້ໜີໄປທີ່ຫໍເຕັນຂອງ
ພຣະຜູ້ເປັນເຈົ້າ ແລະເບິ່ງແມ ລາວຢູ່ຂ້າງແທ່ນບູຊານັ້ນ” ໂຊໂລໂມນ ສັ່ງ ເບນາຢາ ລູກຊາຍ ເຢ-
ໂຮຢາດາ ວ່າ “ຈົ່ງໄປປະຫານຊີວິດລາວ” [30]ເບນາຢາ ກໍມາຍັງຫໍເຕັນຂອງ ພຣະຜູ້ເປັນເຈົ້າ ເວົ້າ
ກັບ ໂຢອາບ ວ່າ “ກະສັດມີຄຳສັ່ງວ່າ ຈົ່ງອອກມາສາ” ເພິ່ນຕອບວ່າ “ບໍ່ອອກໄປ ຂ້ອຍຈະຕາຍ
ຢູ່ບ່ອນນີ້” ແລ້ວ ເບນາຢາ ກໍນຳຄວາມໄປກາບທູນກະສັດອີກວ່າ “ໂຢອາບ ເວົ້າຢ່າງນີ້ ແລະລາວ
ຕອບຂ້ານ້ອຍຢ່າງນີ້” [31]ກະສັດກ່າວຕອບລາວວ່າ “ຈົ່ງເຮັດຕາມທີ່ລາວບອກ ຈົ່ງຂ້າລາວສະ
ແລະຝັງລາວໄວ້ ເພື່ອການຂ້າຄົນທີ່ບໍ່ມີຄວາມຜິດ ຊຶ່ງ ໂຢອາບ ໄດ້ເຮັດນັ້ນ ໃຫ້ພົ້ນໜີໄປຈາກ
ເຮົາ ແລະຈາກເຊື້ອສາຍພໍ່ຂອງເຮົາເສຍ [32]ພຣະຜູ້ເປັນເຈົ້າ ໄດ້ເຮັດໃຫ້ເລືອດຂອງລາວກັບມາ
ຕົກເທິງຫົວຂອງລາວເອງ ເພາະວ່າລາວໄດ້ໂຈມຕີ ແລະຂ້າ ຊາຍສອງຄົນທີ່ຊອບທຳ ແລະດີກ
ວ່າຕົວເອງ ແລະຂ້າພວກເຂົາດ້ວຍດາບ ໂດຍທີ່ ດາວິດ ພໍ່ຂອງເຮົາບໍ່ຮູ້ຈັກຄື ອັບເນ ລູກຊາຍ
ຂອງ ເນ ຜູ້ບັນຊາການກອງທັບຂອງ ອິສຣາເອນ ແລະ ອາມາສາ ລູກຂອງ ເຢເທ ຜູ້ບັນຊາການ
ກອງທັບຂອງ ຢູດາ [33]ດັ່ງນັ້ນ ເລືອດຂອງຄົນທັງສອງຕົກເທິງຫົວຂອງ ໂຢອາບ ແລະ ເທິງຫົວ
ເຊື້ອສາຍຂອງລາວຕະຫລອດໄປ ແຕ່ສັນຕິສຸກຈາກ ພຣະຜູ້ເປັນເຈົ້າ ຈະຢູ່ ເທິງ ດາວິດ ແລະ
ເຊື້ອສາຍຂອງເພິ່ນ ແລະຄອບຄົວຂອງເພິ່ນພ້ອມທັງລາຊະບັນລັງຂອງເພິ່ນຕະຫລອດໄປເປັນ-
ນິດ” [34]ແລ້ວ ເບນາຢາ ລູກຊາຍ ເຢໂຮຢາດາ ກໍຂຶ້ນໄປປະຫານຊີວິດລາວ ແລະຝັງລາວໄວ້ໃນ
ເຮືອນຂອງລາວເອງ ຊຶ່ງຢູ່ ໃນຖິ່ນແຫ້ງແລ້ງກັນດານ ເບນາຢາ ຮັບຕຳແໜ່ງເປັນຜູ້ບັນຊາການ
ກອງທັບ ແລະ ຊາໂດກ ຮັບຕຳແໜ່ງ ເປັນມະຫາປະໂລຫິດ [35]ກະສັດ ໄດ້ແຕ່ງຕັ້ງ ເບນາຢາ ລູກ
ຊາຍ ເຢໂຮຢາດາ ໃຫ້ເປັນຜູ້ບັນຊາການກອງທັບແທນ ໂຢອາບ ແລະກະສັດກໍໄດ້ ແຕ່ງຕັ້ງ ຊາ-
ໂດກ ຜູ້ເປັນປະໂລຫິດແທນຕຳແໜ່ງຂອງ ອາບີອາທາ.

## ຊີເມອີຖືກປະຫານຊີວິດ

[36]ແລ້ວກະສັດ ໄດ້ໃຊ້ຄົນ ໄປຫາ ຊີເມອີ ໃຫ້ເຂົ້າມາເຝົ້າ ແລະບອກລາວວ່າ “ທ່ານຈົ່ງສ້າງ
ເຮືອນຢູ່ໃນເມືອງ ເຢຣູຊາເລັມ ແລະອາໄສຢູ່ບ່ອນນັ້ນ ແລະຢ່າອອກຈາກບ່ອນນັ້ນໄປທາງໃດ
ຈັກເທື່ອ [37]ເພາະໃນມື້ໃດທີ່ທ່ານຈະອອກໄປ ແລະຂ້າມແມ່ນ້ຳ ກິດໂຣນ ນັ້ນ ເຈົ້າຈົ່ງຮູ້ຢ່າງຄັກ-
ແນ່ວ່າ ເຈົ້າຈະຕ້ອງຕາຍ ແລ້ວເລືອດຂອງເຈົ້າຈະຕ້ອງຕົກເທິງຫົວຂອງເຈົ້າເອງ” [38]ແລະຊີເມອີ
ທູນກະສັດວ່າ “ທີ່ທ່ານກ່າວນັ້ນກໍດີແລ້ວ ຜູ້ຮັບໃຊ້ຂອງທ່ານຈະເຮັດຕາມທີ່ກະສັດເຈົ້ານາຍຂອງ
ຂ້ານ້ອຍກ່າວນັ້ນ” ຊີເມອີ ຈຶ່ງໄດ້ອາໄສຢູ່ໃນເມືອງ ເຢຣູຊາເລັມ ເປັນເວລາດົນນານ.
[39]ຕໍ່ມາເມື່ອລ່ວງໄປໄດ້ສາມປີແລ້ວຂ້າທາດສອງຄົນຂອງ ຊີເມອີ ໄດ້ລັກໜີໄປຫາເຈົ້າ ອາກີເຊ

ລູກຊາຍຂອງ ມາອາກາ ກະສັດເມືອງ ກັດ, ເມື່ອພວກເຂົາມາບອກຊີເມອີວ່າ “ເບິ່ງແມ ຂ້າໃຊ້
ຂອງທ່ານຢູ່ໃນເມືອງ ກັດ” 40ຊີເມອີກໍລຸກຂຶ້ນຜູກອານລໍ ຂີ່ໄປເຝົ້າອາກີເຊທີ່ເມືອງ ກັດ ເພື່ອຊອກ
ຫາຂ້າທາດຂອງຕົນ ຊີເມອີໄດ້ໄປນຳເອົາຂ້າ ທາດຂອງຕົນມາຈາກເມືອງ ກັດ 41ແລະເມື່ອມີຜູ້
ກາບທູນ ໂຊໂລໂມນ ວ່າຊີເມອີ ໄດ້ໄປຈາກເມືອງ ເຢຣູຊາເລັມ ເຖິງເມືອງ ກັດ ແລະກັບມາແລ້ວ
42ກະສັດກໍໃຊ້ໃຫ້ຄົນໄປເອີ້ນຊີເມອີມາເຝົ້າ ແລະກ່າວກັບລາວວ່າ “ເຮົາໄດ້ໃຫ້ເຈົ້າປະຕິຍານໃນ
ພຣະນາມຂອງ ພຣະຜູ້ເປັນເຈົ້າບໍ່ແມ່ນບໍ ແລະໄດ້ຕັກເຕືອນເຈົ້າແລ້ວວ່າ ‘ເຈົ້າຈົ່ງຮູ້ຈັກຄັກແນ່
ວ່າ ໃນມື້ໃດທີ່ເຈົ້າອອກໄປ ບໍ່ວ່າໄປທີ່ໃດໆ ເຈົ້າຈະຕ້ອງຕາຍ’ ແລະເຈົ້າກໍໄດ້ຕອບເຮົາວ່າ ‘ຄຳ
ກ່າວທີ່ຂ້ານ້ອຍໄດ້ຍິນນັ້ນກໍດີແລ້ວ’ 43ເປັນຫຍັງເຈົ້າຈຶ່ງບໍ່ຮັກສາຄຳປະຕິຍານໄວ້ຕໍ່ພຣະຜູ້ເປັນ-
ເຈົ້າ ແລະຮັກສາຄຳສັ່ງຊຶ່ງເຮົາໄດ້ສັ່ງແກ່ເຈົ້ານັ້ນ” 44ກະສັດກ່າວກັບຊີເມອີຕໍ່ວ່າ “ເຈົ້າເອງຮູ້
ເລື່ອງເຫດຮ້າຍທັງໝົດຊຶ່ງຢູ່ໃນໃຈຂອງເຈົ້າແລ້ວ ຊຶ່ງເຈົ້າໄດ້ເຮັດຕໍ່ດາວິດພໍ່ ຂອງເຮົາ, ເພາະ-
ສະນັ້ນ ພຣະຜູ້ເປັນເຈົ້າຈະນຳເຫດຮ້າຍມາຕົກຖືກຫົວຂອງເຈົ້າເອງ 45ແຕ່ກະສັດ ໂຊໂລໂມນຈະ
ໄດ້ຮັບພຣະພອນ ແລະພະທີ່ນັ່ງຂອງ ດາວິດ ຈະຕັ້ງໝັ້ນຄົງຢູ່ຕໍ່ພຣະພັກ ພຣະຜູ້ເປັນເຈົ້າ ຕະ-
ຫລອດໄປເປັນນິດ.”

46ແລ້ວກະສັດໄດ້ສັ່ງ ເບນາຢາ ລູກຊາຍ ເຢໂຮຢາດາ ແລະລາວກໍໄດ້ອອກໄປປະຫານຊີວິດຊີ-
ເມອີ ດັ່ງນັ້ນ ລາຊະອານາຈັກໄດ້ຕັ້ງໝັ້ນຄົງຢູ່ໃນພະຫັດຂອງ ໂຊໂລໂມນ.

# ບົດທີ 3

## ໂຊໂລໂມນຊົງອະພິເສກສົມລົດກັບທິດາກະສັດຟາຣາໂອ

1ໂຊໂລໂມນ ໄດ້ຜູກສຳພັນກັບເຈົ້າຊີວິດ ຟາຣາໂອ ແຫ່ງ ເອຢິບ ໂດຍໄດ້ແຕ່ງງານກັບລາຊະ
ທິດາຂອງພະອົງ ແລະພານາງໄປຢູ່ທີ່ເມືອງຂອງ ດາວິດ ຈົນພະອົງສ້າງພະລາຊະວັງຂອງພະ
ອົງເອງ ສ້າງພຣະວິຫານຂອງ ພຣະເຈົ້າ ແລະກຳແພງອ້ອມເມືອງ ເຢຣູຊາເລັມ ສຳເລັດໃນເວລາ
ນັ້ນ. 2ບ່ອນນະມັດສະການພຣະນາມຂອງ ພຣະຜູ້ເປັນເຈົ້າຍັງບໍ່ທັນໄດ້ສ້າງຂຶ້ນເທື່ອ ປະຊາຊົນ
ຈຶ່ງຍັງຖວາຍບູຊາຢູ່ຕາມແທ່ນບູຊາຕ່າງໆ. 3ໂຊໂລໂມນຮັກ ພຣະຜູ້ເປັນເຈົ້າ ແລະຕິດຕາມຄຳ
ສັ່ງສອນຂອງກະສັດ ດາວິດຜູ້ເປັນພໍ່ ແຕ່ວ່າ ເພິ່ນຍັງໄດ້ຖວາຍເຄື່ອງບູຊາ ແລະເຄື່ອງຫອມຢູ່
ຕາມແທ່ນບູຊາເຊັ່ນດຽວ.

## ໂຊໂລໂມນທູນຂໍສະຕິປັນຍາຈາກພຣະເຈົ້າ

4ມື້ໜຶ່ງ ເຈົ້າຊີວິດ ໂຊໂລໂມນ ໄດ້ສະເດັດໄປເມືອງ ກີເບໂອນ ເພື່ອຖວາຍເຄື່ອງບູຊາຢູ່ທີ່ນັ້ນ
ເພາະເປັນສະຖານທີ່ສູງສຸດທີ່ສຳຄັນທີ່ ໂຊໂລໂມນ ໄດ້ເຜົາສັດພັນໂຕຖວາຍຢູ່ເທິງແທ່ນບູຊານີ້
ແລ້ວ. 5ຢູ່ທີ່ເມືອງ ກີເບໂອນ ໃນຕອນກາງຄືນ ພຣະຜູ້ເປັນເຈົ້າຊົງປະກົດທາງຄວາມຝັນໃຫ້
ໂຊໂລໂມນ ເຫັນ ແລະຊົງກ່າວວ່າ, “ເຈົ້າຕ້ອງການຫຍັງຈາກເຮົາ.” 6ໂຊໂລໂມນ ທູນຕອບວ່າ,
“ພຣະອົງຊົງສະແດງຄວາມ ເມດຕາອັນຍິ່ງໃຫຍ່ແກ່ກະສັດ ດາວິດ ພໍ່ຂອງຂ້ານ້ອຍຜູ້ຮັບໃຊ້ຂອງ
ພະອົງ ເມື່ອຄາວເພິ່ນດຳເນີນຊີວິດດ້ວຍຄວາມສັດຊື່ ຍຸດຕິທຳ ແລະມີຈິດໃຈຊື່ຕົງຕໍ່ພຣະອົງ
ພຣະອົງຊົງມີຄວາມກະລຸນາອັນຍິ່ງໃຫຍ່ຕໍ່ເພິ່ນ ໂດຍຍິນຍອມໃຫ້ລູກຊາຍຂອງເພິ່ນຂຶ້ນນັ່ງເທິງ

ບັນລັງໃນມື້ນີ້. 7ຂ້າແດ່ພຣະຜູ້ເປັນເຈົ້າຂອງຂ້ານ້ອຍ ດຽວນີ້ພຣະອົງຊົງໃຫ້ຂ້ານ້ອຍເປັນເຈົ້າຊີ-
ວິດແທນພໍ່ຂອງຂ້ານ້ອຍ ທັງໆ ທີ່ຂ້ານ້ອຍຍັງໜຸ່ມຢູ່ ແລະບໍ່ມີຄວາມຊຳນິຊຳນານດ້ານການປົກ-
ຄອງ. 8ຂ້າໃຊ້ຂອງພຣະອົງໄດ້ໃຊ້ຊີວິດໃນທ່າມກາງໄພ່ພົນທີ່ພຣະອົງຊົງເລືອກໄວ້ ເປັນຊົນຊາດ
ໃຫຍ່ທີ່ມີຈຳນວນຄົນຫລວງຫລາຍຈົນບໍ່ອາດນັບໄດ້. 9ຂ້ານ້ອຍຢາກປົກຄອງໄພ່ພົນຂອງພຣະອົງ
ຢ່າງຍຸດຕິທຳແລະຖືກຕ້ອງ ສະນັ້ນ ຂໍພຣະອົງຊົງປະທານຄວາມສະຫລຽວສະຫລາດໃຫ້ຂ້າ-
ນ້ອຍແດ່ ບໍ່ດັ່ງນັ້ນ ຂ້ານ້ອຍຈະບໍ່ສາມາດປົກຄອງປະຊາຊົນຂອງພຣະອົງຈຳນວນຫລວງຫລາຍ
ຢ່າງນີ້ໄດ້. 10-11ຄຳຮ້ອງຂໍຂອງ ໂຊໂລໂມນ ພໍພຣະໄທ ພຣະຜູ້ເປັນເຈົ້າ ພຣະອົງຈຶ່ງຊົງກ່າວວ່າ,
“ຍ້ອນເຈົ້າບໍ່ໄດ້ຂໍຊີວິດຍືນຍາວ ບໍ່ໄດ້ຂໍຄວາມຮັ່ງມີ ຫລືຂໍຊີວິດສັດຕູ ແຕ່ເຈົ້າໄດ້ທູນຂໍຄວາມສະ-
ຫລຽວສະຫລາດໃນການປົກຄອງ. 12ເຮົາຈະໃຫ້ຕາມທີ່ເຈົ້າໄດ້ທູນຂໍ ເຮົາຈະໃຫ້ເຈົ້າມີຄວາມຄິດ
ສະຫລຽວສະຫລາດຢ່າງທີ່ບໍ່ມີໃຜເຄີຍມີມາກ່ອນ ແລະຈະບໍ່ມີໃຜມີຄືເຈົ້າອີກ. 13ສິ່ງທີ່ເຈົ້າບໍ່ໄດ້ຂໍ
ເຮົາກໍຈະເພີ່ມຕື່ມໃຫ້ແກ່ເຈົ້າ ເຊັ່ນຄວາມຮັ່ງມີ ແລະສະຫງ່າລາສີຕະຫລອດຊົ່ວຊີວິດຂອງເຈົ້າ
ຊຶ່ງບໍ່ມີເຈົ້າຊີວິດອົງໃດມີຄືເຈົ້າ. 14ຖ້າວ່າເຈົ້າເຊື່ອຟັງເຮົາ ແລະຖືຮັກສາຂໍ້ບັນຍັດ ແລະຄຳສັ່ງ
ຂອງເຮົາ ຄືດັ່ງ ດາວິດ ຜູ້ເປັນບິດາຂອງເຈົ້າໄດ້ປະຕິບັດມາ ເຮົາຈະໃຫ້ເຈົ້າມີຊີວິດຍືນຍາວຢູ່ຕໍ່
ໄປ.” 15ແລ້ວ ໂຊໂລໂມນ ກໍຮູ້ເມື່ອ ຈຶ່ງຮູ້ວ່າ ພຣະເຈົ້າຊົງກ່າວຕໍ່ຕົນທາງຄວາມຝັນ ຈາກນັ້ນ ພະ
ອົງໄດ້ກັບຄືນເມືອນະຄອນ ເຢຣູຊາເລັມ ແລ້ວຢືນຢູ່ຕໍ່ໜ້າຫີບຄຳໝັ້ນສັນຍາຂອງ ພຣະຜູ້ເປັນເຈົ້າ
ພະອົງໄດ້ເຜົາຖວາຍເຄື່ອງບູຊາ ແລະເຄື່ອງບູຊາເພື່ອຄວາມສາມັກຄີທຳ ທັງໄດ້ຈັດງານກິນລ້ຽງ
ຢ່າງໃຫຍ່ໂຕສຳລັບຂ້າລາຊະການທຸກຄົນຂອງພະອົງ.

## ໂຊໂລໂມນຕັດສິນຄວາມຢ່າງຍຸດຕິທຳ

16ຢູ່ມາ ມີຍິງໂສເພນີສອງຄົນເຂົ້າມາເຝົ້າເຈົ້າຊີວິດ ໂຊໂລໂມນ. 17ຍິງຄົນໜຶ່ງຈຶ່ງກາບທູນວ່າ
ຂ້າແດ່ພະລາຊາ ຍິງຄົນນີ້ແລະຂ້ານ້ອຍຢູ່ເຮືອນຫລັງດຽວກັນ ໃນຂະນະທີ່ຂ້ານ້ອຍເກີດລູກ.
18ລາວກໍຢູ່ທີ່ນັ້ນ ຫລັງຈາກຂ້ານ້ອຍອອກລູກໄດ້ສາມມື້ແລ້ວ ຍິງຄົນນີ້ກໍເກີດລູກຄືກັນ ພວກຂ້າ-
ນ້ອຍຢູ່ນຳກັນພຽງສອງຄົນເທົ່ານັ້ນ ແລະບໍ່ມີໃຜຢູ່ໃນເຮືອນນຳພວກຂ້ານ້ອຍເລີຍ. 19ຢູ່ມາຄືນ
ໜຶ່ງ ຍິງຜູ້ນີ້ໄດ້ນອນເຕັງລູກຈົນລູກຕາຍ. 20ແລ້ວໃນຕອນທ່ຽງຄືນ ຂະນະທີ່ຂ້ານ້ອຍຍັງນອນ
ຫລັບຢູ່ ລາວໄດ້ລຸກຂຶ້ນໄປອູ້ມເອົາລູກຊາຍຂອງຂ້ານ້ອຍຈາກຂ້າງຂ້ານ້ອຍ ແລະເອົາໄປໄວ້ໃນ
ຕຽງຂອງລາວ ແລ້ວເອົາລູກຊາຍຂອງລາວທີ່ຕາຍແລ້ວນັ້ນມາໃສ່ຕຽງໃຫ້ຂ້ານ້ອຍ. 21ເມື່ອຕື່ນ
ເຊົ້າມາ ເວລາຂ້ານ້ອຍລຸກຂຶ້ນເອົານົມໃຫ້ລູກນ້ອຍກິນ ຂ້ານ້ອຍກໍເຫັນວ່າ ລູກຂ້ານ້ອຍໄດ້ຕາຍ
ເສຍແລ້ວ ຂ້ານ້ອຍຈຶ່ງສັງເກດເບິ່ງຄັກໆ ຈຶ່ງຮູ້ວ່າ ເດັກນ້ອຍທີ່ຕາຍນັ້ນ ບໍ່ແມ່ນລູກຂອງຂ້າ-
ນ້ອຍເລີຍ. 22ແລ້ວຍິງຜູ້ທີສອງເວົ້າຂຶ້ນວ່າ, “ບໍ່ແມ່ນ ຜູ້ຍັງແມ່ນລູກຂ້ອຍ ຜູ້ຕາຍແມ່ນລູກເຈົ້າ”.
ຍິງຜູ້ທຳອິດກໍເວົ້າຕອບວ່າ, “ບໍ່ແມ່ນດອກ ຜູ້ຕາຍແມ່ນລູກເຈົ້າ ຜູ້ຍັງແມ່ນລູກຂ້ອຍ”.

23ທັງສອງໄດ້ຖົກຖຽງກັນຊ້ອງພະພັກເຈົ້າຊີວິດສ່ວນເຈົ້າຊີວິດ ໂຊໂລໂມນ ຈຶ່ງເວົ້າວ່າ, “ແຕ່-
ລະຄົນໃນພວກເຈົ້າຕ່າງກໍພາກັນຫ້ວງວ່າ ຜູ້ຍັງເປັນລູກຂອງຕົນເອງ ແລະຜູ້ຕາຍເປັນລູກຂອງ
ຄົນອື່ນ.” 24ເຈົ້າຊີວິດຊົງກ່າວຕໍ່ໄປວ່າ “ດັ່ງນັ້ນ ຈົ່ງໄປເອົາດາບມາໃຫ້ເຮົາ ແລ້ວເຂົາກໍເອົາດາບ
ນັ້ນມາວາງໄວ້ຕໍ່ພະພັກພະອົງ. 25ເຈົ້າຊີວິດຈຶ່ງສັ່ງວ່າ, “ຈົ່ງຕັດເດັກນ້ອຍທີ່ຍັງນັ້ນອອກເປັນສອງ

ຕ່ອນ ແລະເອົາແບ່ງໃຫ້ຍິງສອງຄົນນີ້ຜູ້ລະຕ່ອນ. 26ຍິງຜູ້ທີ່ເປັນແມ່ແທ້ຂອງເດັກນ້ອຍນັ້ນ ໄດ້ມີ
ຄວາມສົງສານລູກຂອງຕົນເຫລືອຫລາຍ ຈຶ່ງໄດ້ກາບທູນເຈົ້າຊີວິດວ່າ ຂ້າແດ່ພະລາຊາຂອງຂ້າ-
ນ້ອຍ ຖ້າພະອົງຊົງກະລຸນາ ຈົ່ງເອົາເດັກນ້ອຍນັ້ນໃຫ້ລາວເສຍ ຂ້ານ້ອຍຂໍພຽງສິ່ງດຽວຄືຢ່າຂ້າ
ມັນ. ແຕ່ຜູ້ທີສອງເວົ້າວ່າ ຈົ່ງຕັດມັນສາ ເພື່ອມັນຈະບໍ່ໄດ້ເປັນລູກຂອງຜູ້ໃດ. 27ແລ້ວເຈົ້າຊີວິດ
ຈຶ່ງຕັດສິນວ່າ, “ຢ່າຂ້າເດັກນ້ອຍນັ້ນ ຈົ່ງເອົາມັນໃຫ້ຍິງຜູ້ທີໜຶ່ງສາ ເພາະລາວເປັນແມ່ທີ່ແທ້ຈິງ
ຂອງມັນ.” 28ຊາວອິສຣາເອນທຸກຄົນ ໄດ້ຍິນຄຳຕັດສິນຂອງເຈົ້າໂຊໂລໂມນ ພວກເຂົາກໍເຕັມ
ໄປດ້ວຍຄວາມເຄົາລົບນັບຖືພະອົງຢ່າງເລິກເຊິ່ງ ເພາະພວກເຂົາຮູ້ວ່າ ພຣະເຈົ້າຊົງປະທານ
ສະຕິປັນຍາໃຫ້ແກ່ພຣະອົງ ເພື່ອພິຈາລະນາຕັດສິນຢ່າງຍຸດຕິທຳ.

# ບົດທີ 4

## ຂ້າລາຊະການຜູ້ໃຫຍ່ແຫ່ງອິສຣາເອນໃນອານາຈັກຂອງໂຊໂລໂມນ

1ກະສັດ ໂຊໂລໂມນ ເປັນກະສັດປົກຄອງ ອິສຣາເອນ ທັງໝົດ 2ແລະຄົນຕໍ່ໄປນີ້ເປັນຂ້າລາຊະ-
ການຜູ້ໃຫຍ່ຂອງພະອົງ ພວກເຈົ້ານາຍທີ່ກະສັດມີຢູ່ ມີຄືດັ່ງນີ້

ອາຊາຣີຢາ ລູກຊາຍ ຊາໂດກ ເປັນປະໂລຫິດ.
3 ເອລີໂຮເຣັບ ແລະ ອາຣີຢາ ລູກຊາຍ ຊີຊາ ເປັນລາຊະເລຂາ
ເຢໂຮຊາຟັດ ລູກຊາຍ ອາຣີລຸດ ເປັນຜູ້ຈົດບັນທຶກ.
4 ເບນາຢາ ລູກຊາຍ ເຢໂຮຢາດາ ເປັນຜູ້ບັນຊາການກອງທັບ
ຊາໂດກ ແລະ ອາບີອາທາ ເປັນປະໂລຫິດ.
5 ອາຊາຣີຢາ ລູກຊາຍ ນາທານ ເປັນຫົວໜ້າພະນັກງານ
ຊາບຸດ ລູກຊາຍ ນາທານ ເປັນຂ້າລາຊະການຜູ້ໃຫຍ່ ແລະເປັນມິດສະຫາຍຂອງກະສັດ.
6 ອາຮີຊາ ເປັນຜູ້ຄວບຄຸມແຮງງານ ແລະ
ອາໂດນີຣາມ ລູກຊາຍ ອັບດາ ເປັນຜູ້ຄວບຄຸມຄົນທີ່ເຮັດວຽກໜັກ.

## ຂ້າຫລວງສິບສອງຄົນເປັນຜູ້ຈັດຫາສະບຽງອາຫານສຳລັບສຳນັກກະສັດ

7ໂຊໂລໂມນ ມີເຈົ້າພະນັກງານສິບສອງຄົນຢູ່ເໜືອ ອິສຣາເອນ ທັງປວງ ເປັນຜູ້ຈັດຫາສະບຽງ
ອາຫານສຳລັບກະສັດ ແລະສຳລັບຄອບຄົວຂອງກະສັດ ພະນັກງານຄົນໜຶ່ງຈັດຫາສະບຽງອາ-
ຫານສຳລັບເດືອນໜຶ່ງໃນແຕ່ລະປີ. 8ຕໍ່ໄປນີ້ເປັນລາຍຊື່ຂອງພວກເຂົາຄື:

ເບັນ-ຮູເຣ ປະຈຳເຂດພູເຂົາ ເອຟຣາຢິມ.
9 ເບັນ-ເດເກ ປະຈຳໃນເມືອງ ມາກາດ,ຊາອານບິມ,ເບັດ-ເຊເມັດ ແລະເມືອງ ເອໂລນ-ເບັດ-
ຮານານ.
10 ເບັນ-ເຮເສັດ ປະຈຳໃນເມືອງ ອາຣຸບໂບດ (ເພິ່ນມີເມືອງ ໂສໂກ ແລະແຜ່ນດິນ ເຮເຟ ທັງໝົດ)
ກໍຂຶ້ນຢູ່ກັບພວກເຂົາ.
11 ເບັນ-ອາບີນາດາບ ປະຈຳໃນບໍລິເວນເມືອງ ໂດເຣທັງໝົດ (ເພິ່ນເອົານາງ ຕາຟັດ
ລູກສາວຂອງ ໂຊໂລໂມນ ມາເປັນເມຍ).

12 ບາອານາ ລູກຊາຍ ອາຣີລຸດ ປະຈຳໃນເມືອງ ຕາອານັກ ເມກິດໂດ ແລະ ເບັດ-ເຊອານ
ທັງໝົດຊຶ່ງຢູ່ຂ້າງ ຊາເຣທານ ທາງທິດໃຕ້ເມືອງ ເຢດຊະເຣເອນ ແລະຕັ້ງແຕ່ ເບັດ-ເຊອານ
ຮອດ ອາເບັນ-ເມໂຮລາ ກາຍໄປຈົນຮອດ ໂຢກເມອາມ.

13 ເບັນ-ເກເບີ ປະຈຳໃນເມືອງ ຣາໂມດ-ກິເລອາດ (ເພິ່ນມີເມືອງທັງຫລາຍຂອງ ຢາອີ
ລູກຊາຍມານາເຊ ຊຶ່ງຢູ່ໃນ ກິເລອາດ ແລະມີດິນແດນ ອາໂກບ ຊຶ່ງຢູ່ໃນ ບາຊານ
ຫົກສິບຫົວເມືອງໃຫຍ່ ຊຶ່ງມີກຳແພງເມືອງ ແລະຮາວທອງເຫລືອງ).

14 ອາຮີນາດາບ ລູກຊາຍ ອິດໂດ ປະຈຳໃນເມືອງ ມາຮານາຢິມ.

15 ອາຮີມາອາດ ປະຈຳໃນແຂວງ ນັບທາລີ (ເພິ່ນກໍໄດ້ເອົານາງ ບາເຊມາດ ລູກສາວຂອງ ໂຊ-
ໂລໂມນ ມາເປັນເມຍ).

16 ບາອານາ ລູກຊາຍ ຮູຊາຍ ປະຈຳໃນແຂວງ ອາເຊ ແລະ ເບອາໂລດ.

17 ເຢໂຮຊາຟັດ ລູກຊາຍ ປາຣູອາ ປະຈຳໃນແຂວງ ອິດຊາຄາ.

18 ຊີເມອີ ລູກຊາຍ ເອລາ ປະຈຳໃນແຂວງ ເບັນຢາມິນ.

19 ເກເບ ລູກຊາຍ ອູຣີ ປະຈຳໃນແຜ່ນດິນ ກິເລອາດ ໃນແຜ່ນດິນຂອງ ສີໂຮນ ກະສັດຂອງຊາວ
ອະໂມຣິດ ແລະຂອງ ໂອກ ກະສັດແຫ່ງເມືອງ ບາຊານ
ເພິ່ນເປັນພະນັກງານຄົນດຽວທີ່ປະຈຳໃນແຜ່ນດິນນັ້ນ.

20ຄົນ ຢູດາ ແລະ ຄົນ ອິສຣາເອນ ນັ້ນ ມີຈຳນວນຫລວງຫລາຍ ດັ່ງ ເມັດຊາຍທີ່ຢູ່ ແຄມທະເລ
ພວກເຂົາທັງຫລາຍກິນ ແລະດື່ມ ແລະມີຈິດໃຈເບີກບານມ່ວນຊື່ນ 21ແລະ ໂຊໂລໂມນ ໄດ້ປົກ-
ຄອງລາຊະອານາຈັກທັງໝົດ ຕັ້ງແຕ່ແມ່ນ້ຳໄປຈົນຮອດແຜ່ນດິນ ຟີລິດສະຕິນ ແລະຮອດເຂດ
ແດນ ເອຢິບ ພວກເຂົາທັງຫລາຍໄດ້ຖວາຍເຄື່ອງບູຊາ ແລະບົວລະບັດ ໂຊໂລໂມນ ຕະຫລອດວັນ
ເວລາແຫ່ງການມີຊີວິດຂອງທ່ານ 22ອາຫານສຳລັບ ໂຊໂລໂມນ ໃນມື້ໜຶ່ງນັ້ນ ຄືແປ້ງເຂົ້າຈີ່ລະ-
ອຽດດີສາມສິບໂຄເຣ[ກ] ແລະແປ້ງຫົກສິບໂຄເຣ 23ງົວຕຸ້ຍພີ ສິບໂຕ, ງົວຈາກທົ່ງຫຍ້າຊາວໂຕ,
ແກະໜຶ່ງຮ້ອຍໂຕ ນອກຈາກນີ້ ຍັງມີກວາງໂຕຜູ້, ມັ່ງ, ອີເກັ້ງ (ໂອງ) ແລະເປັດໄກ່ໂຕອ້ວນພີ
24ເພາະພະອົງໄດ້ປົກຄອງດິນແດນທັງໝົດຟາກແມ່ນ້ຳເບື້ອງນີ້ ຕັ້ງແຕ່ຕິບສາຮອດຄາຊາ ແລະ
ປົກຄອງບັນດາກະສັດ ທີ່ຢູ່ຟາກແມ່ນ້ຳເບື້ອງນີ້ ແລະມີສັນຕິພາບຢູ່ທຸກດ້ານອ້ອມຮອບພະອົງ
25ຢູດາ ແລະ ອິສຣາເອນກໍຢູ່ຢ່າງປອດໄພ ທຸກຄົນກໍນັ່ງຢູ່ກ້ອງເຄືອອະງຸ່ນ ແລະກ້ອງຕົ້ນໝາກ-
ເດື່ອຂອງຕົນ ຕັ້ງແຕ່ເມືອງ ດານ ຈົນຮອດເມືອງ ເບເອ-ເຊບາ ຕະຫລອດໄລຍະເວລາຂອງ ໂຊໂລ-
ໂມນ 26ໂຊໂລໂມນ ຍັງມີຄອກຂັງມ້າດ່ຽວອີກສີ່ໝື່ນສຳລັບລົດຮົບຂອງພະອົງ ແລະທະຫານມ້າ
ໜຶ່ງໝື່ນສອງພັນຄົນ 27ແລະບັນດາພະນັກງານ ເຫລົ່ານັ້ນກໍຈັດສະບຽງອາຫານສົ່ງໃຫ້ກະສັດ ໂຊ-
ໂລໂມນ ແລະເພື່ອທຸກຄົນທີ່ມາຮ່ວມ ໂຕະອາຫານຂອງກະສັດ ໂຊໂລໂມນ ຕ່າງກໍສົ່ງເຄື່ອງຕາມ
ແຕ່ລະເດືອນຂອງຕົນ ພວກເຂົາທັງຫລາຍບໍ່ໃຫ້ຂາດສິ່ງໜຶ່ງສິ່ງໃດ 28ທັງເຂົ້າເປືອກ ແລະເຟືອງ
ສຳລັບມ້າ ແລະອູດ ພວກເຂົາສົ່ງໄປຍັງສະຖານທີ່ຂອງພະນັກງານ ເຫລົ່ານັ້ນ ອີງຕາມໜ້າທີ່
ຂອງທຸກຄົນ.

---

[ກ]ໜຶ່ງໂຄເຣ ຄື ປະມານ 20 ໝື່ນ

## ສະຕິປັນຍາຂອງໂຊໂລໂມນມາຈາກພຣະເຈົ້າ

[29]ແລະ ພຣະເຈົ້າ ໄດ້ປະທານໃຫ້ ໂຊໂລໂມນ ມີສະຕິປັນຍາ ແລະຄວາມເຂົ້າໃຈຢ່າງລົ້ນ ທັງມີ
ຈິດໃຈກວ້າງຂວາງດັ່ງ ເມັດຊາຍທີ່ຢູ່ແຄມຝັ່ງທະເລ [30]ແລະສະຕິປັນຍາຂອງ ໂຊໂລໂມນ ກໍໃຫຍ່
ກວ່າສະຕິປັນຍາທັງໝົດ ຂອງ ລູກຫລານ ຊາວ ຕາເວັນ ອອກ ແລະ ໃຫຍ່ກວ່າບັນດາສະຕິປັນຍາ
ຂອງ ເອຢິບ [31]ແລະພະອົງມີສະຕິປັນຍາສະຫລາດກວ່າຄົນທັງປວງ, ສະຫລາດກວ່າ ເອທານ
ຊາວ ເອັດຊະຣາ ແລະ ເຮມານ ການໂກນ ແລະ ດາດາ, ບັນດາລູກຊາຍຂອງ ມາໂຮນ; ແລະ
ພະນາມຂອງພະອົງກໍຊ່າລືໄປໃນທຸກປະຊາຊາດທີ່ຢູ່ ອ້ອມຮອບ [32]ພະອົງກ່າວເປັນຄຳສຸພາສິດ
ສາມພັນຂໍ້ ແລະບົດເພງຂອງພະອົງກໍມີໜຶ່ງພັນຫ້າບົດ [33]ພະອົງ ໄດ້ກ່າວເຖິງຕົ້ນໄມ້ຕັ້ງແຕ່ຕົ້ນ
ແປກຊຶ່ງຢູ່ໃນ ເລບານອນ ຈົນຮອດຕົ້ນຫູສົບຊຶ່ງ ເກີດອອກມາຈາກກຳແພງ ພະອົງ ໄດ້ກ່າວເຖິງ
ສັດປ່າ ທັງບັນດານົກ, ສັດເລືອຄານແລະປາ [34]ແລະມີຄົນຈາກຊົນຊາດທັງຫລາຍທີ່ໄດ້ມາຟັງ
ສະຕິປັນຍາຂອງ ໂຊໂລໂມນ ແລະມາຈາກບັນດາກະສັດແຫ່ງ ແຜ່ນດິນ ໂລກຜູ້ຊຶ່ງໄດ້ຍິນຂ່າວ
ເຖິງສະຕິປັນຍາຂອງພະອົງ.

# ບົດທີ 5

## ການຕຽມສ້າງພຣະວິຫານ

[1]ເມື່ອ ຮີຣາມ ເຈົ້າຊີວິດເມືອງ ຕີເຣ ໄດ້ຍິນວ່າ ໂຊໂລໂມນ ຖືກຫົດສົງດ້ວຍນ້ຳມັນ ແລະແຕ່ງຕັ້ງ
ໃຫ້ເປັນເຈົ້າຊີວິດ ແທນພໍ່ແລ້ວ ເພິ່ນກໍສົ່ງທູດໄປຫາພະອົງ ເພາະວ່າ ຮີຣາມ ແລະ ດາວິດ ເຄີຍ
ເປັນ ເພື່ອນທີ່ດີຕໍ່ກັນຕະຫລອດມາ. [2-3]ສ່ວນ ໂຊໂລໂມນ ຈຶ່ງສົ່ງຂ່າວໄປບອກເຈົ້າ ຮີຣາມ ດັ່ງນີ້ວ່າ
“ພະອົງກໍຮູ້ຢູ່ແລ້ວວ່າກະສັດ ດາວິດ ພໍ່ຂອງຂ້ານ້ອຍ ບໍ່ສາມາດສ້າງພຣະວິຫານສຳລັບນະມັດສະ-
ການ ພຣະຜູ້ເປັນເຈົ້າ ຂອງ ເພິ່ນໄດ້ ເພາະວ່າມີສັດຕູເຮັດເສິກຕໍ່ເພິ່ນຢູ່ຮອບດ້ານ ຈົນ ພຣະຜູ້-
ເປັນເຈົ້າ ໄດ້ໃຫ້ເພິ່ນຊະນະສັດຕູທັງໝົດຂອງ ເພິ່ນ. [4]ແຕ່ວ່າດຽວນີ້ ພຣະຜູ້ເປັນເຈົ້າ ຊົງ ໃຫ້ຂ້າ-
ນ້ອຍມີຄວາມສະຫງົບສຸກທົ່ວປະເທດ ບໍ່ມີສັດຕູ ບໍ່ມີການທຳລາຍ. [5]ສະນັ້ນ ຂ້ານ້ອຍຈຶ່ງມີ
ແຜນການສ້າງພຣະວິຫານສຳລັບນະມັດສະການ ພຣະຜູ້ເປັນເຈົ້າ ຂອງຂ້ານ້ອຍ ຕາມທີ່ພຣະອົງ
ຊົງສັນຍາໄວ້ ກັບກະສັດ ດາວິດ ພໍ່ຂອງຂ້ານ້ອຍວ່າ, “ລູກຊາຍຂອງ ເຈົ້າຜູ້ທີ່ ເຮົາຈະ ໃຫ້ຂຶ້ນນັ່ງ
ບັນລັງແທນເຈົ້ານັ້ນ ຈະ ເປັນຜູ້ສ້າງພຣະວິຫານສຳລັບນະມັດສະການ ເຮົາ.” [6]ດັ່ງນັ້ນ ຂໍພະອົງ
ຈົ່ງຊົງກະລຸນາສົ່ງຄົນຂອງພະອົງມາຍັງ ເລບານອນ ເພື່ອຕັດ ໄມ້ສົນ ໃຫ້ຂ້ານ້ອຍ ຂ້ານ້ອຍຈະ
ຈ່າຍຄ່າແຮງງານ ໃຫ້ຄົນຂອງພະອົງຕາມທີ່ພະອົງຊົງ ເຫັນດີ ພະອົງກໍຮູ້ຢູ່ແລ້ວວ່າ ຄົນຂອງຂ້າ-
ນ້ອຍບໍ່ມີໃຜເປັນຊ່າງຕັດຕົ້ນໄມ້ ຄືຄົນຂອງພະອົງ.”

[7]ເມື່ອ ຮີຣາມ ໄດ້ຍິນຖ້ອຍຄຳຂອງ ໂຊໂລໂມນ ພະອົງກໍຊົມຊື່ນຍິນດີ ແລະກ່າວວ່າ, “ຂໍ ພຣະ-
ຜູ້ເປັນເຈົ້າ ຈົ່ງເປັນທີ່ຍ້ອງຍໍສັນລະເສີນ ພຣະອົງຊົງປະທານໃຫ້ເຈົ້າຊີວິດ ດາວິດ ມີລາຊະ ໂອລົດ
ສະຫລາດຫລັກແຫລມ ໃນການປົກຄອງປະຊາຊົນອັນຫລວງຫລາຍນີ້.” [8]ແລະ ເຈົ້າ ຮີຣາມ ກໍສົ່ງ
ຂ່າວໄປບອກເຈົ້າ ໂຊໂລໂມນ ວ່າ, “ຂ້ານ້ອຍ ໄດ້ຮັບຂ່າວຂອງພະອົງ ແລ້ວ ສ່ວນຂ້ານ້ອຍຈະ ໃຫ້
ທຸກສິ່ງຕາມທີ່ພະອົງຕ້ອງການ ຂ້ານ້ອຍຈະຈັດຫາ ໄມ້ສົນ ແລະ ໄມ້ແປກນັ້ນ. [9]ຄົນໃຊ້ຂອງຂ້າ-

ນ້ອຍຈະນຳໄມ້ເຫລົ່ານີ້ ມາຈາກພູເລບານອນລົງສູ່ທະເລ ພວກເຂົາຈະມັດມັນເປັນແພລ່ອງຕາມ
ທະເລ ໄປຍັງບ່ອນທີ່ພະອົງຄາດຄະເນໄວ້ເມື່ອຮອດບ່ອນດັ່ງກ່າວ ຂ້ານ້ອຍຈະໃຫ້ພວກເຂົາແກ້
ມັດອອກ ແລະພະອົງກໍຈະເອົາໄມ້ເຫລົ່ານີ້ໄປ ສ່ວນພາລະຂອງພະອົງຂໍໃຫ້ຈັດຫາອາຫານການ
ກິນສຳລັບຄົນຂອງຂ້ານ້ອຍ.”

[10]ຮີຣາມ ຈຶ່ງຈັດສົ່ງໄມ້ສົນ ແລະໄມ້ແປກທັງໝົດ ຕາມທີ່ໂຊໂລໂມນຕ້ອງການ. [11]ຝ່າຍໂຊ-
ໂລໂມນກໍສົ່ງເຂົ້າບາເລເຈັດພັນໂຕນ ພ້ອມທັງນ້ຳມັນສົດສີ່ຮ້ອຍໂຕນ ເພື່ອລ້ຽງພວກໃນວັງຂອງ
ຮີຣາມ ໂຊໂລໂມນຈັດສົ່ງໃຫ້ຮີຣາມທຸກໆ ປີ. [12]ພຣະຜູ້ເປັນເຈົ້າຊົງປະທານສະຕິປັນຍາແກ່
ໂຊໂລໂມນ ຕາມທີ່ພຣະອົງຊົງສັນຍາໄວ້ກັບເພິ່ນ ໂຊໂລໂມນກັບຮີຣາມກໍຜູກສຳພັນທະໄມຕີ
ແລະເຮັດຄຳສັນຍາໄວ້ຕໍ່ກັນເປັນຢ່າງດີ.

[13]ກະສັດໂຊໂລໂມນໄດ້ຮວບຮວມຄົນງານທົ່ວທັງອິສຣາເອນ ເພື່ອເປັນກຳລັງໃນການເຮັດ
ວຽກ ຈຳນວນແຮງງານທີ່ເກນມາມີສາມສິບພັນຄົນ. [14]ພະອົງຊົງແຕ່ງຕັ້ງອາໂດນີຣາມເປັນຜູ້
ກຳກັບພວກເຂົາ ພະອົງໄດ້ສັບປ່ຽນຄົນເຫລົ່ານີ້ໄປມາທີ່ພູເລບານອນ ເດືອນໜຶ່ງມີສິບພັນຄົນ
ພວກເຂົາຢູ່ພູເລບານອນໜຶ່ງເດືອນ ແລະກັບຄືນມາຢູ່ບ້ານສອງເດືອນ. [15]ກະສັດໂຊໂລໂມນຍັງ
ມີພວກຕັດຫີນຢູ່ເທິງພູແປດສິບພັນຄົນ ແລະພວກຂົນຫີນເຈັດສິບພັນຄົນ. [16]ນອກຈາກນີ້ ຍັງມີ
ພວກຂ້າລາຊະການປົກຄອງເປັນຜູ້ດູແລວຽກການສາມພັນສາມຮ້ອຍຄົນ ເພື່ອກຳກັບຄົນງານ
ເຮັດວຽກ. [17]ຕາມຄຳຮັບສັ່ງຂອງເຈົ້າຊີວິດ ພວກເຂົາໄດ້ຂຸດເອົາຫີນກ້ອນໃຫຍ່ໆ ເພື່ອເອົາໄປ
ວາງເປັນຮາກຖານຂອງພຣະວິຫານ. [18]ຄົນງານຂອງກະສັດໂຊໂລໂມນ ແລະຄົນງານຂອງກະ-
ສັດຮີຣາມ ພ້ອມທັງຜູ້ທີ່ມາຈາກເມືອງເກບາໄດ້ຕັດໄມ້ ແລະກ້ອນຫີນໂຮມກັນໄວ້ ເພື່ອກໍ່ສ້າງ
ພຣະວິຫານ.

# ບົດທີ 6

## ກະສັດໂຊໂລໂມນສ້າງພຣະວິຫານ

[1]ໃນປີທີສີ່ຮ້ອຍແປດສິບ ຫລັງຈາກພວກອິສຣາເອນອອກຈາກປະເທດເອຢິບ ຊຶ່ງເປັນປີທີສີ່
ທີ່ໂຊໂລໂມນຂຶ້ນປົກຄອງອິສຣາເອນ ໃນເດືອນທີສອງເຈົ້າຊີວິດໂຊໂລໂມນໄດ້ຕັ້ງຕົ້ນສ້າງ
ພຣະວິຫານຂອງພຣະຜູ້ເປັນເຈົ້າ. [2]ທາງໃນພຣະວິຫານມີລວງຍາວຫົກສິບສອກ ລວງກວ້າງ
ຊາວສອກ ແລະລວງສູງສາມສິບສອກ. [3]ຫ້ອງທາງເຂົ້າກວ້າງຊາວສອກ ແລະເລິກເຂົ້າໄປຮອດ
ຫ້ອງກາງສິບສອກ. [4]ພະອົງໄດ້ເຮັດຂອບໃສ່ປ່ອງຢ້ຽມ ແລະເຮັດລົກໄມ້ໃສ່. [5]ພະອົງສ້າງຫ້ອງ
ແຖວຕິດກັບຝາພຣະວິຫານ ອ້ອມຫ້ອງກາງ ແລະຫ້ອງສັກສິດທີ່ສຸດ ພຣະອົງໄດ້ສ້າງຫ້ອງລ່ວງ
ຫາກັນອ້ອມຮອບທີ່ນັ້ນ. [6]ຫ້ອງລຸ່ມກວ້າງຫ້າສອກ ຫ້ອງຊັ້ນກາງກວ້າງຫົກສອກແລະຊັ້ນທີສາມ
ກວ້າງເຈັດສອກ ທາງດ້ານອ້ອມຮອບຝາພຣະວິຫານຂ້າງນອກ ເພິ່ນໄດ້ສ້າງເປັນພັກເພື່ອບໍ່ໃຫ້
ໄມ້ຂາງຂອງຫ້ອງແຖວສອດເຂົ້າໃນຝາ. [7]ຫີນທີ່ນຳມາສ້າງພຣະວິຫານນີ້ ໄດ້ຈັດຕຽມຮຽບຮ້ອຍ
ມາແຕ່ບ່ອນຂຸດດິນພຸ້ນ ດັ່ງນັ້ນ ໃນຂະນະທີ່ກຳລັງກໍ່ສ້າງຢູ່ຈຶ່ງບໍ່ໄດ້ຍິນສຽງຄ້ອນຕີ ສຽງເຫລັກ
ແກະຈີ້ມ ຫລືເຫລັກຫລາຍຢ່າງໃດໝົດ. [8]ສ່ວນທາງເຂົ້າເບື້ອງຂວາພຣະວິຫານ ມີຂັ້ນໃດວຽນຂຶ້ນ

ໄປຫາຫ້ອງຊັ້ນກາງ ແລະຂຶ້ນຕໍ່ໄປຫາຫ້ອງຊັ້ນສາມກໍເຊັ່ນດຽວກັນ. 9ພະອົງໄດ້ໃຊ້ໄມ້ສົນເຮັດ
ເພດານ ແລ້ວພະອົງໄດ້ສ້າງພຣະວິຫານສຳເລັດລົງ. 10ຫ້ອງແຖວອ້ອມພຣະວິຫານຊຶ່ງມີລວງສູງ
ຊັ້ນລະຫ້າສອກ ໄດ້ມີທ່ອນໄມ້ສົນແບບຕິດໃສ່ຝາພຣະວິຫານ.

11-12ແລ້ວ ພຣະຜູ້ເປັນເຈົ້າ ຊົງກ່າວຕໍ່ ໂຊໂລໂມນ ວ່າ, "ກ່ຽວກັບຫໍໂຮງທີ່ເຈົ້າກຳລັງສ້າງຢູ່ນີ້
ຖ້າເຈົ້າຫາກເຮັດຕາມຂໍ້ຄຳສັ່ງຂອງເຮົາ ເຊື່ອຟັງກົດລະບຽບຂອງເຮົາ ແລະປະຕິບັດຕາມພຣະ-
ບັນຍັດຂອງເຮົາຢ່າງສັດຊື່ ເຮົາຈະໃຫ້ເຈົ້າໄດ້ຮັບຕາມຄຳສັນຍາທີ່ເຮົາໄດ້ເຮັດໄວ້ກັບພໍ່ຂອງເຈົ້າ.
13ຄື ເຮົາຈະຢູ່ນຳພວກໄພ່ພົນ ອິສຣາເອນ ຂອງເຮົາ ໃນພຣະວິຫານທີ່ເຈົ້າກຳລັງສ້າງຢູ່ນີ້ ແລະ
ເຮົາຈະບໍ່ປະຖິ້ມພວກເຂົາຈັກເທື່ອ."

14-15ເຈົ້າ ໂຊໂລໂມນ ໄດ້ສ້າງພຣະວິຫານຕໍ່ໄປຈົນສຳເລັດ ພະອົງໄດ້ເອົາໄມ້ສົນແອ້ມຝາທາງ
ໃນ ຕັ້ງແຕ່ພື້ນພຣະວິຫານຈົນຈຸເພດານ ແລະພື້ນພຣະວິຫານກໍປູດ້ວຍໄມ້ແປກ. 16ທາງດ້ານໃນ
ສຸດ ພະອົງໄດ້ເອົາໄມ້ສົນແອ້ມແຕ່ພື້ນຈຸເພດານ ຫ້ອງນີ້ແທກໄດ້ຊາວສອກ ພະອົງໄດ້ກະຫ້ອງນີ້
ໄວ້ເປັນບ່ອນສັກສິດທີ່ສຸດ. 17-18ຫ້ອງກາງຍາວໄດ້ສີ່ສິບສອກ ຫ້ອງນີ້ແອ້ມດ້ວຍໄມ້ສົນທີ່ແກະ-
ສະຫລັກເອ້ຄວັດລາຍເປັນຮູບນ້ຳເຕົ້າ ແລະຮູບດອກໄມ້ ດັ່ງນັ້ນຝານັ້ນຈຶ່ງມີແຕ່ໄມ້ສົນ ໂດຍບໍ່
ເຫັນກ້ອນຫີນເລີຍ.

19ພະອົງສ້າງຫ້ອງສັກສິດທີ່ສຸດໃນພຣະວິຫານເປັນບ່ອນບັນຈຸຫີບຄຳສັນຍາຂອງ ພຣະຜູ້ເປັນ-
ເຈົ້າ. 20ຫ້ອງນີ້ຍາວຊາວສອກ ກວ້າງຊາວສອກ ແລະສູງຊາວສອກ ພະອົງໄດ້ໂອບຄຳນ້ຳໜຶ່ງ
ໃສ່ທົ່ວທັງຫ້ອງນີ້ ພະອົງໄດ້ສ້າງແທ່ນບູຊາດ້ວຍໄມ້ສົນ. 21ທາງໃນພຣະວິຫານໂອບດ້ວຍຄຳ
ແລະມີໂສ້ຄຳຜູກຜ່ານທາງໜ້າຫ້ອງສັກສິດທີ່ສຸດ. 22ພະອົງໄດ້ເອົາຄຳໂອບທົ່ວທັງໝົດພຣະວິ-
ຫານ.

23ທາງໃນຫ້ອງສັກສິດທີ່ສຸດ ພະອົງໄດ້ສ້າງຮູບເທວະດາເຄຣຸບດ້ວຍໝາກກອກຊຶ່ງສູງສິບ
ສອກ. 24ປີກແຕ່ລະຂ້າງຂອງຮູບເທວະດາເຄຣຸບຍາວຫ້າສອກ ນັບຕັ້ງແຕ່ສົ້ນປີກຊ້າຍຫາສົ້ນປີກ
ຂວາຍາວສິບສອກ. 25ຮູບເທວະດາເຄຣຸບອົງໜຶ່ງອີກກໍແທກໄດ້ສິບສອກຄືກັນ ຮູບເທວະດາທັງ
ສອງອົງວັດແທກໄດ້ເທົ່າກັນ ແລະມີຮູບຮ່າງລັກສະນະຢ່າງດຽວກັນ. 26ລວງສູງຂອງແຕ່ລະຮູບ
ກໍເທົ່າກັນ. 27ພະອົງເອົາຮູບເທວະດາເຄຣຸບໄວ້ໃຈກາງຫ້ອງສັກສິດທີ່ສຸດ ປີກເບື້ອງໜຶ່ງຂອງເທ-
ວະດາແຕ່ລະອົງໄດ້ເດ່ອອກຈຸຝາ ແລະປີກເບື້ອງໜຶ່ງກໍເດ່ຈຸກັນ. 28ຮູບເທວະດາເຄຣຸບນີ້ໂອບ
ດ້ວຍຄຳ.

29ພະອົງແກະສະຫລັກຝາຂອງພຣະວິຫານນັ້ນໂດຍຮອບ ດ້ວຍຮູບແກະສະຫລັກເປັນຮູບເຄ-
ຣຸບ ແລະຕົ້ນຕານ ແລະດອກໄມ້ບານ ທັງຂ້າງໃນ ແລະຂ້າງນອກ 30ພື້ນຂອງພຣະວິຫານນັ້ນ
ພະອົງໄດ້ໂອບດ້ວຍຄຳທັງຂ້າງໃນ ແລະຂ້າງນອກ 31ສຳລັບທາງເຂົ້າໄປຫ້ອງຫລັງ ພະອົງໄດ້
ສ້າງປະຕູດ້ວຍໄມ້ໝາກກອກເທດ ຈອມປະຕູຊັ້ນເທິງ ແລະວົງກົບປະຕູ ລວມເຂົ້າເປັນໜຶ່ງໃນ
ຫ້າຂອງຂະໜາດຂອງຝາ 32ພະອົງໄດ້ສ້າງບານປະຕູທັງສອງດ້ວຍໄມ້ໝາກກອກເທດ ແກະ-
ສະຫລັກຮູບເຄຣຸບ, ຕົ້ນຕານ ແລະດອກໄມ້ບານໂອບດ້ວຍຄຳ ພະອົງໄດ້ເອົາແຜ່ນຄຳຫຸ້ມເຄຣຸບ
ແລະອ້ອມຕົ້ນຕານ 33ພະອົງໄດ້ສ້າງວົງກົບປະຕູທາງເຂົ້າຫ້ອງໂຖງດ້ວຍໄມ້ໝາກກອກເທດ

ເປັນໜຶ່ງໃນສີ່ຂອງຂະໜາດຂອງຝາ [34]ແລະບານປະຕູສອງບານເຮັດດ້ວຍໄມ້ແປກ, ບານປະຕູ
ສອງບານຂອງປະຕູໜຶ່ງໝູນໄດ້ ແລະບານອີກສອງບານ ຂອງປະຕູໜຶ່ງກໍໝູນໄດ້ [35]ພະອົງ
ແກະສະຫລັກເຄຣຸບ ຕົ້ນຕານ ແລະດອກໄມ້ບານເທິງບານປະຕູນັ້ນ ແລະໄດ້ໂອບດ້ວຍຄຳສະ-
ມໍ່າສະເໝີກັນເທິງຮູບແກະສະຫລັກນັ້ນ [36]ພະອົງໄດ້ສ້າງເດີ່ນພາຍໃນດ້ວຍກຳແພງຫີນແກະສະ-
ຫລັກສາມຊັ້ນ ແລະດ້ວຍໄມ້ສົນຊັ້ນໜຶ່ງ.

[37]ໃນປີທີສີ່ກໍໄດ້ວາງຮາກຖານພຣະວິຫານຂອງພຣະຜູ້ເປັນເຈົ້າໃນເດືອນຊີບ[ກ] [38]ແລະໃນປີ
ທີສິບເອັດໃນເດືອນບູເລຊຶ່ງເປັນເດືອນທີແປດ ພຣະວິຫານນັ້ນກໍສຳເລັດໝົດທຸກໆສ່ວນ ແລະ
ສຳເລັດ ຕາມລາຍການທັງໝົດ ພະອົງໄດ້ກໍ່ສ້າງພຣະວິຫານນັ້ນເປັນເວລາເຈັດປີ.

# ບົດທີ 7

## ການພັນລະນາເຖິງພຣະວິຫານ ແລະເຄື່ອງຕົກແຕ່ງຕ່າງໆ

[1]ໂຊໂລໂມນໄດ້ສ້າງພະລາຊະວັງຂອງພະອົງສິບສາມປີ ແລະສ້າງພະລາຊະວັງຂອງພະອົງ
ສຳເລັດທັງໝົດ [2]ພະອົງໄດ້ສ້າງເຮືອນແຫ່ງດົງພູເລບານອນ ຍາວໜຶ່ງຮ້ອຍສອກ, ກວ້າງຫ້າ
ສິບສອກ ແລະສູງສາມສິບສອກ ຢູ່ເທິງເສົາໄມ້ສົນສີ່ແຖວມີການໄມ້ສົນຢູ່ເທິງເສົາ [3]ຊັ້ນເທິງມຸງ
ດ້ວຍໄມ້ສົນ ຊຶ່ງຢູ່ເທິງເສົາສີ່ສິບຫ້າຕົ້ນ, ແຖວລະສິບຫ້າຕົ້ນ [4]ມີປ່ອງຢ້ຽມສາມແຖວ ປ່ອງຢ້ຽມ
ຢູ່ກົງກັນຂ້າມປ່ອງຢ້ຽມທັງສາມແຖວ [5]ຂອບປະຕູ ແລະຂອບປ່ອງຢ້ຽມທັງໝົດເປັນໄມ້ມີລັກສະ-
ນະສີ່ຫລ່ຽມ ແລະປ່ອງຢ້ຽມກໍຢູ່ກົງກັນຂ້າມກັບປ່ອງຢ້ຽມທັງສາມແຖວ [6]ແລະພະອົງໄດ້ສ້າງ
ຫ້ອງລະບຽງ ຍາວຫ້າສິບສອກ ແລະກວ້າງສາມສິບສອກ ມີລະບຽງດ້ານໜ້າ ແລະມີເສົາກັບ
ຫລັງຄາດ້ານໜ້າ [7]ແລະພະອົງໄດ້ສ້າງລະບຽງບ່ອນນັ່ງ ເປັນບ່ອນໃຫ້ຄຳຕັດສິນ ເປັນລະບຽງ
ສານຕັດສິນ ປູດ້ວຍໄມ້ສົນຈາກຝາກເບື້ອງໜຶ່ງໄປຫາອີກຝາກເບື້ອງໜຶ່ງ [8]ລາຊະວັງຊຶ່ງພະອົງ
ຈະປະທັບຢູ່ນັ້ນມີເດີ່ນອີກແຫ່ງໜຶ່ງຊຶ່ງຢູ່ພາຍໃນຫ້ອງລະບຽງ ສ້າງດ້ວຍສີມືຊ່າງຢ່າງດຽວກັນ,
ໂຊໂລໂມນໄດ້ສ້າງວັງຄືຫ້ອງລະບຽງນີ້ສຳລັບລູກສາວຂອງຟາຣາໂອ ຊຶ່ງພະອົງໄດ້ເອົາມາເປັນ
ມະເຫສີ [9]ທັງໝົດເຫລົ່ານີ້ສ້າງດ້ວຍຫີນອັນມີຄ່າ ສະກັດອອກມາຕາມຂະໜາດ, ໃຊ້ເລື່ອຍ
ເລື່ອຍທັງດ້ານໃນ ແລະດ້ານນອກ ຕັ້ງແຕ່ຮາກເຖິງຍອດຝາ ແລະມີຕັ້ງແຕ່ຂ້າງນອກຮອດເດີ່ນ
ໃຫຍ່ [10]ຮາກຖານນັ້ນເຮັດດ້ວຍຫີນທີ່ມີຄ່າ ຫີນກ້ອນໃຫຍ່ມີຂະໜາດແປດສອກ ແລະສິບສອກ
[11]ຂ້າງເທິງກໍເປັນຫີນທີ່ມີຄ່າ ສະກັດອອກມາຕາມຂະໜາດ ແລະມີໄມ້ສົນ [12]ກຳແພງເດີ່ນໃຫຍ່
ອ້ອມຮອບດ້ວຍຫີນທີ່ສະກັດອອກມາຕາມຂະໜາດມີສາມແຖວ ແລະໄມ້ສົນແຖວໜຶ່ງ ເດີ່ນລານ
ພາຍໃນພຣະວິຫານຂອງພຣະຜູ້ເປັນເຈົ້າກໍຄືກັນ ທັງລະບຽງພຣະວິຫານດ້ວຍ.

[13]ກະສັດໂຊໂລໂມນໃຊ້ຄົນໃຫ້ໄປນຳຮີຣາມມາຈາກເມືອງຕີເຣ [14]ເພິ່ນເປັນລູກຊາຍຂອງແມ່-
ໝ້າຍຈາກຕະກູນນັບທາລີ ແລະພໍ່ຂອງເພິ່ນເປັນຊາວເມືອງຕີເຣ ເປັນຊ່າງທອງເຫລືອງ ແລະ
ເພິ່ນປະກອບດ້ວຍສະຕິປັນຍາ ມີຄວາມເຂົ້າໃຈ ແລະມີສີມືທີ່ຈະເຮັດວຽກທຸກຢ່າງດ້ວຍທອງ-
ເຫລືອງ ເພິ່ນມາເຝົ້າກະສັດໂຊໂລໂມນ ແລະເຮັດວຽກທັງໝົດຂອງພະອົງ.

---

[ກ]ເດືອນຊີບ ກົງກັບເດືອນສິບສອງ

15ເພິ່ນໄດ້ເຮັດເສົາທອງເຫລືອງສອງເສົາ ແຕ່ລະເສົາສູງສິບແປດສອກແທກຂະໜາດເສັ້ນ
ຮອບຂອງແຕ່ລະເສົາໄດ້ສິບສອງສອກ 16ເພິ່ນເຮັດບົວຫົວເສົາສອງອັນດ້ວຍທອງເຫລືອງຫລໍ່
ເພື່ອຈະວາງໄວ້ເທິງຍອດເສົາ ບົວຫົວເສົາອັນໜຶ່ງສູງຫ້າ ສອກ ແລະຄວາມສູງຂອງບົວຫົວເສົາ
ອີກອັນໜຶ່ງກໍສູງຫ້າສອກ 17ແລ້ວມີພວງມະໄລເປັນຕາໜ່າງ ຄືກັບໂສ້ອ້ອມຮອບບົວທີ່ຢູ່ເທິງຫົວ
ເສົາເຈັດອັນ ສຳລັບບົວນັ້ນອັນໜຶ່ງ ແລະເຈັດອັນສຳລັບບົວອີກອັນໜຶ່ງ 18ເພິ່ນເຮັດເສົານັ້ນພ້ອມ
ກັບໝາກພິລາໃຫ້ມີສອງແຖວຊຶ່ງພວງມະໄລເສັ້ນໜຶ່ງອ້ອມຮອບບົວທີ່ຢູ່ຍອດເສົາ ແລະເພິ່ນກໍ
ເຮັດຢ່າງດຽວກັນສຳລັບບົວອີກອັນໜຶ່ງ 19ຝ່າຍບົວທີ່ຢູ່ເທິງຍອດເສົາທີ່ຢູ່ໃນລະບຽງນັ້ນເປັນຮູບ
ດອກບົວຂະໜາດສີ່ສອກ 20ບົວຊຶ່ງຢູ່ເທິງເສົາສອງຕົ້ນນັ້ນມີຮູບໝາກພິລາດ້ວຍ ແລະຢູ່ເໜືອຄື້ວ
ຊຶ່ງຢູ່ຖັດຕາທີ່ມີໝາກພິລາສອງຮ້ອຍໜ່ວຍຢູ່ອ້ອມຮອບເປັນສອງແຖວ ບົວອີກອັນໜຶ່ງກໍມີຄືກັນ
21ເພິ່ນຕັ້ງເສົາທັງສອງໄວ້ໃກ້ລະບຽງພຣະວິຫານ ເພິ່ນຕັ້ງເສົາເບື້ອງຂວາໄວ້ ແລະເອີ້ນຊື່ວ່າຢາ-
ກິນ ແລະເພິ່ນຕັ້ງເສົາເບື້ອງຊ້າຍໄວ້ ແລະເອີ້ນຊື່ວ່າໂບອາດ 22ແລະເທິງຍອດເສົານັ້ນເປັນລາຍ
ດອກບົວ ວຽກງານສຳລັບເສົາກໍສຳເລັດດັ່ງນີ້ແຫລະ.

23ແລ້ວເພິ່ນໄດ້ຫລໍ່ຂັນເປັນຂັນມົນໆແທກຈາກຂອບໜຶ່ງໄປຫາອີກຂອບໜຶ່ງໄດ້ສິບສອກ ສູງ
ຫ້າສອກ ແລະແທກລວງຮອບແທກໄດ້ສາມສິບສອກ 24ລຸ່ມປາກຂອບເປັນດອກຈູມ ໃນໄລຍະ
ໜຶ່ງສອກມີຮູບດອກຈູມສິບດອກຢູ່ອ້ອມໜ່ວຍຂັນ ດອກຈູມມີສອງແຖວ ຫລໍ່ໄວ້ນຳກັນເວລາຫລໍ່
ຂັນ 25ຂັນນັ້ນວາງຢູ່ເທິງຮູບງົວສິບສອງໂຕ ສາມໂຕຫັນໜ້າໄປທິດເໜືອ ສາມຕົວຫັນໜ້າໄປ
ທິດຕາເວັນຕົກ ສາມໂຕຫັນໜ້າໄປທິດໃຕ້ ອີກສາມໂຕຫັນໜ້າໄປທິດຕາເວັນອອກ ເພິ່ນວາງ
ຂັນຢູ່ເທິງຮູບງົວ ສ່ວນຫລັງທັງໝົດຂອງຮູບງົວຢູ່ດ້ານໃນຂັນ 26ຂັນໜາໜຶ່ງຄືບ, ຂອບຂອງຂັນ
ເຮັດຄືຂອບຖ້ວຍຄືກັບດອກບົວບັນຈຸນ້ຳໄດ້ສອງພັນບັດ.[ກ]

27ເພິ່ນເຮັດແທ່ນທອງເຫລືອງສິບອັນ ແທ່ນອັນໜຶ່ງຍາວສີ່ສອກ ກວ້າງສີ່ສອກ ສູງສາມສອກ
28ສ່ວນແທ່ນນັ້ນ ສ້າງດັ່ງນີ້ ມີບັນດາແຜ່ນຝັງຢູ່ໃນຂອບ 29ເທິງແຜ່ນທີ່ຝັງຢູ່ໃນຂອບນັ້ນມີຮູບສິງ
ໃຫຍ່ ງົວ ແລະເຄຣຸບ ຢູ່ຂອບເທິງ ແລະລຸ່ມສິງໃຫຍ່ ແລະງົວ ມີລວດລາຍເປັນພວງມະໄລ
30ແທ່ນທຸກໜ່ວຍມີລໍ້ທອງເຫລືອງສີ່ລໍ້ ແລະມີເພົາທອງເຫລືອງ ແລະຢູ່ແຈທັງສີ່ມີອັນຄ້ຳທີ່ຫລໍ່
ແລ້ວ ມີພວງມະໄລຫ້ອຍຢູ່ທຸກຂ້າງ 31ຊ່ອງເປີດຢູ່ໃນບົວຊຶ່ງຍາວຂຶ້ນໄປໜຶ່ງສອກ ຊ່ອງເປີດນັ້ນ
ມົນຄືກັບເຂົາເຮັດແທ່ນ ເລິກໜຶ່ງສອກເຄິ່ງ ແລະເຄິ່ງຊ່ອງເປີດນັ້ນມີລາຍແກະສະຫລັກ ແລະ
ແຜ່ນສີ່ຫລ່ຽມ 32ລໍ້ທັງສີ່ຢູ່ລຸ່ມແຜ່ນ ເພົາລໍ້ນັ້ນເປັນອັນດຽວກັບແທ່ນ, ລໍ້ອັນໜຶ່ງສູງໜຶ່ງສອກເຄິ່ງ
33ລໍ້ນັ້ນເພິ່ນເຮັດຄືລໍ້ລົດຮົບ ທັງເພົາ, ຂອບລໍ້ ຊີ່ ແລະດຸມກໍຫລໍ່ເອົາ 34ແທ່ນໜຶ່ງໆມີອັນຄ້ຳຢູ່
ບ່ອນແຈທັງສີ່, ບ່ອນຄ້ຳນີ້ຫລໍ່ເປັນອັນດຽວກັບແທ່ນ 35ຢູ່ເທິງຍອດແທ່ນມີວົງມົນຍອດສູງຄືບໜຶ່ງ
ແລະເທິງຍອດແທ່ນນັ້ນມີຂອບ ແລະແຜ່ນຕິດເປັນອັນດຽວກັບແທ່ນ 36ພື້ນຂອບ ແລະພື້ນແຜ່ນ
ເພິ່ນແກະສະຫລັກເປັນຮູບເຄຣຸບ ສິງໃຫຍ່ ແລະຕົ້ນຕານ ຕາມບ່ອນວ່າງຂອງແຕ່ລະອັນມີພວງ
ມະໄລອ້ອມຮອບ 37ເພິ່ນໄດ້ເຮັດແທ່ນສິບແທ່ນຕາມແບບນີ້ ຫລໍ່ຄືກັນໝົດທຸກອັນ ຂະໜາດດຽວ
ກັນ ແລະຮູບຮ່າງຄືກັນ.

[ກ]ສີ່ໝື່ນລິດ

[38]ເພິ່ນເຮັດຂັນທອງເຫລືອງສິບໜ່ວຍ, ຂັນໜ່ວຍໜຶ່ງບັນຈຸນ້ຳໄດ້ສີ່ສິບບັດ[ກ] ຂະໜາດຂັນ
ໜ່ວຍໜຶ່ງແມ່ນສີ່ສອກ ມີຂັນແທ່ນລະໜ່ວຍທັງສິບແທ່ນ [39]ເພິ່ນວາງແທ່ນ (ຕີນ) ຂັນນັ້ນໄວ້
ທາງເບື້ອງຂວາຂອງພຣະວິຫານຫ້າແທ່ນ (ຕີນ) ແລະທາງເບື້ອງຊ້າຍຂອງພຣະວິຫານຫ້າແທ່ນ
(ຕີນ) ແລະເພິ່ນວາງຂັນໄວ້ຢູ່ເບື້ອງຂວາພຣະວິຫານທາງທິດຕາເວັນອອກສຽງໃຕ້.

[40]ຮີຣາມໄດ້ເຮັດຂັນ ຊ້ວນ ແລະຊາມດ້ວຍ ດັ່ງນັ້ນ ຮີຣາມກໍສຳເລັດງານທັງໝົດ ຊຶ່ງເພິ່ນ
ຕ້ອງເຮັດຖວາຍກະສັດ ໂຊໂລໂມນ ສຳລັບພຣະວິຫານຂອງ ພຣະຜູ້ເປັນເຈົ້າ [41]ເສົາສອງຕົ້ນ ທັງ
ສອງຂອງບົວທີ່ຢູ່ເທິງຍອດເສົາ ແລະຕາໜ່າງສອງຜືນຊຶ່ງຄຸມທັງສອງຂອງບົວທີ່ຢູ່ເທິງຍອດເສົາ
[42]ແລະໝາກພິລາສີ່ຮ້ອຍໜ່ວຍສຳລັບຕາໜ່າງສອງອັນ ຕາໜ່າງອັນໜຶ່ງມີໝາກພິລາສອງແຖວ
ເພື່ອປົກສົ້ນທັງ ສອງຂອງບົວທີ່ຢູ່ເທິງເສົາ [43]ແທ່ນ ສິບແທ່ນ ແລະຂັນສິບໜ່ວຍຊຶ່ງຢູ່ເທິງແທ່ນ
[44]ແລະຂັນໃຫຍ່ອັນໜຶ່ງ ແລະງົວສິບສອງໂຕທີ່ຢູ່ກ້ອງຂັນໃຫຍ່ນັ້ນ [45]ໝໍ້ ຊ້ວນ ແລະຊາມ ພາ-
ຊະນະທັງໝົດເຫລົ່ານີ້ໃນພຣະວິຫານຂອງ ພຣະຜູ້ເປັນເຈົ້າ ຮີຣາມ ໄດ້ເຮັດຖວາຍກະສັດ ໂຊ-
ໂລໂມນ ເປັນຂອງທີ່ເຮັດດ້ວຍທອງເຫລືອງຂັດມັນທັງໝົດ [46]ກະສັດໄດ້ຫລໍ່ສິ່ງເຫລົ່ານີ້ໃນທົ່ງພຽງ
ລຸ່ມຂອງແມ່ນ້ຳຢໍແດນ ແລະໃນດິນທີ່ເປັນຕົມລະຫວ່າງເມືອງສຸກໂກດ ແລະເມືອງຊາເຣທານ
[47]ໂຊໂລໂມນບໍ່ໄດ້ຊັ່ງເຄື່ອງໃຊ້ທັງໝົດເຫລົ່ານີ້ ເພາະວ່າມີຈຳນວນຫລາຍນຳກັນ ຈຶ່ງບໍ່ໄດ້ຊັ່ງ
ນ້ຳໜັກຂອງທອງ ເຫລືອງ.

[48]ໂຊໂລໂມນໄດ້ເຮັດເຄື່ອງໃຊ້ທັງໝົດທີ່ຢູ່ໃນພຣະວິຫານຂອງ ພຣະຜູ້ເປັນເຈົ້າ ຄືແທ່ນບູຊາ
ຄຳ ແລະເຮັດໂຕະເຂົ້າຈີ່ຕໍ່ໜ້າພຣະພັກດ້ວຍຄຳ [49]ຕະກຽງເຮັດດ້ວຍຄຳບໍລິສຸດຢູ່ທາງເບື້ອງຂວາ
ຫ້າອັນ ຢູ່ທາງເບື້ອງຊ້າຍຫ້າອັນ ຂ້າງໜ້າ ແລະຫລັງຫ້ອງ ດອກໄມ້ ຕະກຽງ ແລະມີດຕັດໃສ້-
ຕະກຽງເຮັດດ້ວຍຄຳ [50]ອ່າງ ມີດຕັດໃສ້ຕະກຽງ ຊາມ ບ່ວງ ແລະໝໍ້ກຳຍານເຮັດດ້ວຍຄຳບໍລິ-
ສຸດ ແລະບານພັບປະຕູສ່ວນຊັ້ນໃນ ພຣະວິຫານ ຄືບ່ອນບໍລິສຸດທີ່ສຸດ ແລະສຳລັບປະຕູຫ້ອງ
ໂຖງຂອງພຣະວິຫານກໍເຮັດດ້ວຍຄຳ [51]ບັນດາກິດຈະການຊຶ່ງກະສັດ ໂຊໂລໂມນ ເຮັດສຳລັບ
ພຣະວິຫານຂອງ ພຣະຜູ້ເປັນເຈົ້າກໍໄດ້ສຳເລັດດັ່ງນີ້ ແລະ ໂຊໂລໂມນນຳບັນດາສິ່ງຂອງຊຶ່ງດາ-
ວິດ ພໍ່ຂອງຕົນຖວາຍໄວ້ນຳເຂົ້າມາຄື ເຄື່ອງເງິນ ເຄື່ອງຄຳ ແລະເຄື່ອງໃຊ້ຕ່າງໆ ແລະເກັບ
ຮັກສາໄວ້ໃນຄັງພຣະວິຫານຂອງ ພຣະຜູ້ເປັນເຈົ້າ.

# ບົດທີ 8

## ໂຊໂລໂມນນຳຫີບຄຳສັນຍາມາໄວ້ໃນພຣະວິຫານ

[1]ກະສັດ ໂຊໂລໂມນ ໄດ້ເຊີນເຫລົ່າຫົວໜ້າເຜົ່າແຕ່ລະຫົວໜ້າຕະກູນ ອິສຣາເອນ ມາຍັງນະ-
ຄອນ ເຢຣູຊາເລັມ ເພື່ອນຳຫີບຄຳສັນຍາຂອງ ພຣະຜູ້ເປັນເຈົ້າ ຈາກເມືອງຊີໂອນ ເມືອງຂອງດາ-
ວິດ ໄປຍັງພຣະວິຫານ. [2]ເມື່ອວັນສະຫລອງໃນເດືອນເຈັດ ຊາວອິສຣາເອນທຸກຄົນໄດ້ມາຊ້ອງ
ພະພັກເຈົ້າຊີວິດ ໂຊໂລໂມນ. [3]ເມື່ອພວກຜູ້ນຳທຸກຄົນມາໂຮມກັນແລ້ວ ພວກປະໂລຫິດໄດ້ນຳຫີບ
ຄຳສັນຍາຂອງ ພຣະເຈົ້າມາ ຊຶ່ງແມ່ນຄົນ ເລວີ ເປັນຜູ້ຫາມ. [4]ຫາມທັງຜ້າເຕັນສັກສິດ ແລະພາ-

[ກ]ແປດຮ້ອຍລິດ

ຊະນະສັກສິດມາຍັງພຣະວິຫານ. 5ແລ້ວກະສັດ ໂຊໂລໂມນ ພ້ອມທັງພວກ ອິສຣາເອນ ທຸກຄົນ ກໍ
ເອົາແກະ ແລະງົວຢ່າງຫລວງຫລາຍມາຖວາຍບູຊາຢູ່ຕໍ່ໜ້າຫີບຄຳສັນຍາ.
6ຕໍ່ມາ ພວກປະໂລຫິດຈຶ່ງນຳເອົາຫີບຄຳສັນຍາຂອງ ພຣະຜູ້ເປັນເຈົ້າ ເຂົ້າໄປບັນຈຸໄວ້ ໃນ
ຫ້ອງຫລັງສຸດຂອງພຣະວິຫານ ຊຶ່ງເປັນຫ້ອງສັກສິດທີ່ສຸດ ຫີບຄຳສັນຍານັ້ນຢູ່ກ້ອງປີກຂອງເທ-
ວະດາເຄຣຸບ. 7ປີກເທວະດາເຄຣຸບ ໄດ້ປົກກວມໄມ້ຄານຫາມຫີບຄຳສັນຍານັ້ນດ້ວຍ. 8ໄມ້ຄານ
ຫາມຫີບນີ້ຍາວຫລາຍ ຖ້າເບິ່ງແຕ່ນອກຫ້ອງສັກສິດກໍເຫັນໄດ້ແຕ່ຖ້າເບິ່ງທາງນອກພຣະວິຫານກໍ
ຈະບໍ່ເຫັນ ໄມ້ຄານຫາມກໍຢູ່ບ່ອນນັ້ນເທົ່າທຸກມື້ນີ້.

## ພຣະຜູ້ເປັນເຈົ້າຊົງສະຖິດຢູ່ໃນພຣະວິຫານ

9ຢູ່ໃນຫີບຄຳສັນຍານັ້ນ ມີແຕ່ຫີນສອງແຜ່ນທີ່ ໂມເຊ ບັນຈຸໄວ້ທີ່ພູຊີນາຍ ຊຶ່ງເປັນແຜ່ນຫີນ
ແຫ່ງຄຳສັນຍາທີ່ ພຣະຜູ້ເປັນເຈົ້າ ຊົງມີໄວ້ກັບພວກ ອິສຣາເອນ ຄາວ ເມື່ອພວກ ເຂົາ ເດີນທາງ
ອອກຈາກປະເທດ ເອຢິບ. 10ເມື່ອພວກປະໂລຫິດອອກມາຈາກບ່ອນສັກສິດ ກ້ອນເມກໄດ້ປົກ
ຫຸ້ມ ພວກປະໂລຫິດບໍ່ອາດກັບຄືນໄປປະຕິບັດວຽກການໄດ້. 11ເພາະວ່າລັດສະໝີຂອງ ພຣະຜູ້-
ເປັນເຈົ້າ ໄດ້ເຕັມໃນພຣະວິຫານນັ້ນ.
12ແລ້ວກະສັດ ໂຊໂລໂມນ ກໍອ້ອນວອນວ່າ, “ຂ້າແດ່ ພຣະຜູ້ເປັນເຈົ້າ ພຣະອົງຊົງໃຫ້ຕາເວັນຢູ່
ເທິງທ້ອງຟ້າ ແຕ່ພຣະອົງຊົງປະທັບຢູ່ໃນກ້ອນເມກ ແລະຄວາມມືດມິດ. 13ດຽວນີ້ ຂ້ານ້ອຍໄດ້
ສ້າງບ່ອນຢູ່ອາໄສໃຫ້ພຣະອົງຊຶ່ງເປັນບ່ອນພຣະອົງຊົງສະຖິດຢູ່ຕະຫລອດໄປ.”

## ກະສັດໂຊໂລໂມນກ່າວຄຳປາໄສຕໍ່ປະຊາຊົນ

14ແລ້ວກະສັດ ໂຊໂລໂມນ ກໍຫັນມາອວຍພອນ ແກ່ຊຸມນຸມຊົນ ອິສຣາເອນ ທຸກຄົນ. 15ໃນຂະນະ
ທີ່ທຸກຄົນກຳລັງຢືນຢູ່ ພະອົງຊົງກ່າວວ່າ, “ສາທຸການ ແດ່ ພຣະຜູ້ເປັນເຈົ້າ ຂອງ ອິສຣາເອນ ຜູ້
ຊົງຖືຮັກສາຄຳສັນຍາທີ່ມີຕໍ່ກະສັດ ດາວິດ ພະບິດາຂອງຂ້ານ້ອຍ. 16ດັ່ງຄຳທີ່ວ່າ ນັບຕັ້ງແຕ່ມື້ທີ່
ເຮົາໄດ້ນຳເອົາໄພ່ພົນ ອິສຣາເອນ ຂອງເຮົາອອກມາຈາກປະເທດ ເອຢິບ ເຮົາບໍ່ໄດ້ເລືອກເອົາຫົວ
ເມືອງ ໃນຕະກູນໜຶ່ງຕະກູນ ໃດຂອງ ອິສຣາເອນ ເພື່ອໃຫ້ພວກ ເຂົາສ້າງສະຖານທີ່ຢູ່ສຳລັບ ເຮົາ
ແຕ່ເຮົາໄດ້ເລືອກເອົາ ດາວິດ ເປັນຜູ້ປົກຄອງໄພ່ພົນ ອິສຣາເອນ ຂອງເຮົາ. 17ກະສັດ ດາວິດ ບິດາ
ຂອງຂ້າພະເຈົ້າໄດ້ຕັ້ງພະໄທສ້າງພຣະວິຫານສຳລັບ ພຣະຜູ້ເປັນເຈົ້າ. 18ແຕ່ ພຣະຜູ້ເປັນເຈົ້າ ຊົງ
ກ່າວຕໍ່ສະເດັດພໍ່ຂອງຂ້າພະເຈົ້າວ່າ, “ເຈົ້າໄດ້ຕັ້ງໃຈສ້າງວິຫານສຳລັບເຮົາ ອັນນັ້ນກໍເປັນການດີ
ຢູ່. 19ແຕ່ວ່າ ບໍ່ແມ່ນເຈົ້າຈະເປັນຜູ້ສ້າງວິຫານນີ້ ແມ່ນລູກຊາຍຂອງ ເຈົ້າຈະສ້າງວິຫານສຳລັບ
ເຮົາ.” 20ພຣະຜູ້ເປັນເຈົ້າ ຊົງຮັກສາຄຳໝັ້ນສັນຍາຂອງພຣະອົງ ຂ້າພະເຈົ້າຈຶ່ງໄດ້ຂຶ້ນຄອງລາຊະ
ສົມບັດ ແທນສະເດັດພໍ່ຂອງຂ້າພະເຈົ້າ ແລະຂ້າພະເຈົ້າກໍໄດ້ນັ່ງຢູ່ ເທິງລາຊະບັນລັງຂອງ ອິ-
ສຣາເອນ ຕາມທີ່ ພຣະຜູ້ເປັນເຈົ້າ ຊົງສັນຍາໄວ້ ສະນັ້ນ ຂ້າພະເຈົ້າຈຶ່ງສ້າງພຣະວິຫານສຳລັບ
ພຣະຜູ້ເປັນເຈົ້າ ຊຶ່ງເປັນ ພຣະເຈົ້າ ຂອງ ອິສຣາເອນ. 21ແລະໄດ້ສ້າງບ່ອນບັນຈຸຫີບຄຳສັນຍາ
ຊຶ່ງ ພຣະຜູ້ເປັນເຈົ້າ ຊົງມີໄວ້ກັບປູ່ຍ່າຕາຍາຍຂອງພວກ ເຮົາ ເວລາທີ່ພຣະອົງຊົງນຳພວກ ເພິ່ນ
ອອກມາຈາກປະເທດ ເອຢິບ.

## ກະສັດໂຊໂລໂມນອ້ອນວອນພຣະຜູ້ເປັນເຈົ້າ

22ແລ້ວກະສັດ ໂຊໂລໂມນ ກໍໄດ້ຢືນຢູ່ຕໍ່ໜ້າແທ່ນບູຊາຂອງ ພຣະຜູ້ເປັນເຈົ້າ ຢູ່ຕໍ່ໜ້າຊຸມນຸມ
ອິສຣາເອນ ທຸກຄົນ. 23ພະອົງຍົກພະຫັດຂຶ້ນຟ້າ ແລ້ວກ່າວຂຶ້ນວ່າ, “ຂ້າແດ່ ພຣະຜູ້ເປັນເຈົ້າ ບໍ່
ວ່າໃນສະຫວັນຊັ້ນຟ້າ ຫລືພື້ນແຜ່ນດິນໂລກນີ້ ບໍ່ມີໃຜເໝືອນພຣະອົງ ພຣະອົງຊົງສັດຊື່ຕໍ່ຄຳ-
ໝັ້ນສັນຍາ ແລະຊົງມີຄວາມຮັກໝັ້ນຄົງຕໍ່ພວກຂ້າໃຊ້ຂອງພຣະອົງ ເວລາພວກເຂົາດຳເນີນຕາມ
ທາງຂອງພຣະອົງຢ່າງສຸດຈິດສຸດໃຈ. 24ພຣະອົງຊົງຮັກສາຄຳສັນຍາທີ່ມີໄວ້ກັບກະສັດ ດາວິດ ຜູ້
ຮັບໃຊ້ຂອງພຣະອົງ ໃນມື້ນີ້ພຣະອົງຊົງເຮັດຕາມຄຳສັນຍາຂອງພຣະອົງ. 25ຂ້າແດ່ ພຣະຜູ້ເປັນ-
ເຈົ້າ ພຣະເຈົ້າຂອງ ອິສຣາເອນ ດຽວນີ້ ຂໍພຣະອົງຊົງໂຜດຕາມທີ່ສັນຍາໄວ້ກັບກະສັດ ດາວິດ
ຂ້າໃຊ້ຂອງພຣະອົງວ່າ ໃນພະທີ່ນັ່ງຂອງ ອິສຣາເອນ ເຈົ້າຈະບໍ່ຂາດຜູ້ທີ່ນັ່ງຢູ່ຕໍ່ໜ້າເຮົາຈັກເທື່ອ
ພຽງແຕ່ພວກລູກຊາຍຂອງເຈົ້າປະຕິບັດຕົນຢ່າງລະມັດລະວັງ ແລະດຳເນີນຊີວິດຕາມ ຢ່າງທີ່
ເຈົ້າໄດ້ເຄີຍປະຕິບັດຕໍ່ໜ້າເຮົາ. 26ຂ້າແດ່ ພຣະເຈົ້າຂອງຊາວ ອິສຣາເອນ ຂໍໃຫ້ພຣະວາຈາຂອງ
ພຣະອົງເປັນຈິງດັ່ງທີ່ພຣະອົງຊົງກ່າວໄວ້ຕໍ່ກະສັດ ດາວິດ ຜູ້ຮັບໃຊ້ຂອງພຣະອົງເທີ້ນ.

27ຂ້າແດ່ ພຣະເຈົ້າ ພຣະອົງຈະຢູ່ນຳມະນຸດໃນໂລກນີ້ໄດ້ບໍ? ແມ່ນແຕ່ສະຫວັນຊັ້ນຟ້າອັນສູງ
ສຸດກໍຍັງບໍ່ເໝາະສົມສຳລັບພຣະອົງ ເຫດໃດພຣະວິຫານທີ່ຂ້ານ້ອຍໄດ້ສ້າງຂຶ້ນນີ້ ຈຶ່ງຈະເໝາະ
ສົມກັບພຣະອົງ? 28ຂ້າແດ່ ພຣະຜູ້ເປັນເຈົ້າຂອງຂ້ານ້ອຍ ເຖິງແມ່ນວ່າວິຫານນີ້ນ້ອຍກໍຈິງ ຂໍຈົ່ງ
ຟັງຄຳອ້ອນວອນທູນຂໍຈາກຂ້າໃຊ້ຂອງພຣະອົງ ໃນມື້ນີ້ ຂໍພຣະອົງຊົງຟັງຄຳຮ້ອງ ແລະຄຳ
ອ້ອນວອນ ທີ່ຂ້າໃຊ້ຂອງພຣະອົງທູນຕໍ່ພຣະອົງ. 29ຂໍພຣະອົງຊົງທອດພຣະເນດເຝົ້າເບິ່ງແຍງວິ-
ຫານນີ້ຕະຫລອດວັນ ແລະຄືນ ບ່ອນນີ້ເປັນບ່ອນທີ່ພຣະອົງຊົງເລືອກໄວ້ໃຫ້ເປັນບ່ອນນະມັດ-
ສະການ ໃນຂະນະທີ່ຂ້ານ້ອຍໄດ້ອ້ອນວອນຢູ່ນີ້ ຂໍຊົງຮັບຟັງຂ້ານ້ອຍດ້ວຍ. 30ເມື່ອຂ້ານ້ອຍ
ແລະໄພ່ພົນຂອງພຣະອົງອ້ອນວອນຢູ່ບ່ອນນີ້ ພຣະອົງຜູ້ຊົງສະຖິດຢູ່ເທິງສະຫວັນຊັ້ນຟ້າຂໍຊົງ
ຟັງສຽງພວກຂ້ານ້ອຍ ແລະຍົກໂທດໃຫ້ພວກຂ້ານ້ອຍດ້ວຍ.

31ຖ້າຜູ້ໜຶ່ງຖືກຟ້ອງວ່າລາວເປັນຄົນເຮັດຜິດຕໍ່ຜູ້ອື່ນ ແລະພວກເຂົາຈະໃຫ້ລາວມາສາບານຕໍ່
ແທ່ນບູຊາຂອງພຣະອົງໃນພຣະວິຫານນີ້ ເພື່ອສະແດງວ່າເປັນຜູ້ບໍລິສຸດ. 32ພຣະອົງຜູ້ຊົງປະທັບ
ຢູ່ເທິງສະຫວັນຊັ້ນຟ້າ ຂໍຊົງຮັບຟັງພວກຜູ້ຮັບໃຊ້ຂອງພຣະອົງ ແລະຊົງລົງໂທດຄົນຜິດຕາມ
ຄວາມປະພຶດຂອງລາວ ແລະຂໍຊົງປ່ອຍຕົວຜູ້ທີ່ຍຸດຕິທຳນັ້ນ.

33ເມື່ອພວກ ອິສຣາເອນ ໄພ່ພົນຂອງພຣະອົງພ່າຍແພ້ສັດຕູຍ້ອນພວກເຂົາໄດ້ເຮັດຜິດຕໍ່ພຣະ-
ອົງ ຖ້າວ່າພວກເຂົາກັບຄືນມາສັນລະເສີນພຣະນາມຂອງພຣະອົງ ແລະອ້ອນວອນທູນຂໍການ
ອະໄພໂທດຈາກພຣະອົງຢູ່ໃນພຣະວິຫານນີ້. 34ພຣະອົງຜູ້ຊົງປະທັບເທິງສະຫວັນຊັ້ນຟ້າ ຂໍຈົ່ງ
ຊົງຮັບຟັງແລະໃຫ້ອະໄພບາບຊາວ ອິສຣາເອນ ໄພ່ພົນຂອງພຣະອົງ ແລະຊົງນຳພວກເຂົາກັບຄືນ
ມາສູ່ແຜ່ນດິນທີ່ພຣະອົງໄດ້ຊົງປະທານໃຫ້ແກ່ປູ່ຍ່າຕາຍາຍຂອງພວກເຂົາ.

35ເມື່ອໄພ່ພົນຂອງພຣະອົງເຮັດຜິດ ພຣະອົງກໍລົງໂທດໂດຍບໍ່ໃຫ້ຝົນຕົກ ແລະພວກເຂົາກໍ
ອວ່າຍໜ້າຄືນມາສູ່ພຣະວິຫານ ເພື່ອອ້ອນວອນ ແລະສັນລະເສີນພຣະອົງ. 36ພຣະອົງຜູ້ຊົງປະ-
ທັບເທິງສະຫວັນຊັ້ນຟ້າ ຂໍຈົ່ງຮັບຟັງສຽງຂອງພວກເຂົາ ຂໍພຣະອົງຊົງໃຫ້ອະໄພຄວາມຜິດຂອງ

ເຈົ້າຊີວິດ ແລະໄພ່ພົນອິສຣາເອນດ້ວຍ ຂໍຊົງສອນພວກເຂົາໄປໃນທາງທີ່ຖືກຕ້ອງ ຂໍຊົງຖອກ
ເທຝົນລົງມາເທິງແຜ່ນດິນ ທີ່ພຣະອົງໄດ້ຊົງປະທານໃຫ້ເປັນສ່ວນໄພ່ພົນຂອງພຣະອົງຕະຫລອດ
ໄປ.

37ໃນແຜ່ນດິນນີ້ ຖ້າມີການອຶດຢາກ ໂຣກລະບາດ ການທຳລາຍ ຫລືຕົ້ນໄມ້ເກີດພະຍາດ ມີ
ຝູງຕັກແຕນ ແລະດ້ວງມາທຳລາຍຕົ້ນໄມ້ໃຫ້ເສຍຫາຍ ຫລືວ່າ ຖ້າມີສັດຕູມາອ້ອມເມືອງນີ້ທຸກ
ດ້ານ ຫລືມີໄພພິບັດ ແລະການເຈັບໄຂ້ໄດ້ພະຍາດ ຂໍພຣະອົງຊົງຟັງຄຳອ້ອນວອນຂອງພວກ
ເຂົາດ້ວຍ. 38ຖ້າຜູ້ໃດຜູ້ໜຶ່ງມີຄວາມທຸກໃຈ ລາວກໍຍົກມືອ້ອນວອນຂໍຮ້ອງໄປທາງພຣະວິຫານນີ້.
39**ພຣະຜູ້ເປັນເຈົ້າ**ປະທັບເທິງສະຫວັນຊັ້ນຟ້າ ຂໍຈົ່ງຊົງຮັບຟັງ ຊົງອະໄພ ແລະປະຕິບັດຕໍ່ທຸກ
ຄົນຕາມຄວາມປະພຶດຂອງພວກເຂົາ ເພາະພຣະອົງເທົ່ານັ້ນທີ່ຮູ້ຈັກຄວາມນຶກຄິດຂອງມະນຸດທຸກ
ຄົນ ຂໍພຣະອົງຊົງປະຕິບັດກັບແຕ່ລະຄົນ ຕາມຄວາມປະພຶດຂອງພວກເຂົາ. 40ເພື່ອວ່າພວກເຂົາ
ຈະເຄົາລົບຢຳເກງພຣະອົງ ຕະຫລອດເວລາທີ່ພວກເຂົາອາໄສຢູ່ໃນແຜ່ນດິນທີ່ພຣະອົງຊົງປະ-
ທານໃຫ້ແກ່ບັນພະບູລຸດຂອງພວກຂ້ານ້ອຍ.

41ຂ້າແດ່**ພຣະຜູ້ເປັນເຈົ້າ** ເມື່ອຄົນຕ່າງປະເທດທີ່ຢູ່ຫ່າງໄກມານະມັດສະການ ແລະອ້ອນ-
ວອນພຣະອົງໃນພຣະວິຫານນີ້. 42ຍ້ອນໄດ້ຍິນຊື່ສຽງ ແລະກິດຈະການອັນຍິ່ງໃຫຍ່ທີ່ພຣະອົງຊົງ
ກະທຳຕໍ່ໄພ່ພົນຂອງພຣະອົງ. 43ພຣະອົງຜູ້ຊົງປະທັບເທິງສະຫວັນຊັ້ນຟ້າ ຂໍຊົງຮັບຟັງແລະຊົງ
ຕອບຕາມຄຳອ້ອນວອນຂອງລາວ ເພື່ອວ່າຊົນຊາດທັງໝົດໃນໂລກນີ້ຈະຮູ້ຈັກ ແລະເຄົາລົບຢຳ
ເກງພຣະອົງ ເໝືອນໄພ່ພົນຂອງພຣະອົງເອງ ແລະໃຫ້ພວກເຂົາຮູ້ຈັກວ່າພຣະອົງຊົງປະທັບຢູ່ໃນ
ພຣະວິຫານທີ່ຂ້ານ້ອຍໄດ້ສ້າງຂຶ້ນນີ້.

44ຖ້າໄພ່ພົນຂອງພຣະອົງອອກໄປຕໍ່ສູ້ກັບສັດຕູຂອງພວກເຂົາ ທີ່ສະໜາມຮົບ ຖ້າວ່າເຂົາເຈົ້າ
ປິ່ນໜ້າອ້ອນວອນໃສ່ເມືອງທີ່ພຣະອົງຊົງເລືອກໄວ້ ແລະໃສ່ພຣະວິຫານບ່ອນທີ່ຂ້ານ້ອຍສ້າງສຳ-
ລັບພຣະອົງນີ້. 45ຂໍພຣະອົງຜູ້ຊົງປະທັບຢູ່ເທິງສະຫວັນຊັ້ນຟ້າ ຂໍຊົງຮັບຟັງຄຳອ້ອນວອນຂອງ
ພວກເຂົາ ແລະຊົງໂຜດໃຫ້ພວກເຂົາໄດ້ຮັບໄຊຊະນະ.

46ຖ້າວ່າ ໄພ່ພົນຂອງພຣະອົງເຮັດຜິດຕໍ່ພຣະອົງ ເພາະວ່າ ບໍ່ມີມະນຸດຄົນໃດທີ່ບໍ່ກະທຳຜິດ
ແລະພຣະອົງຊົງພຣະພິໂລດພວກເຂົາ ໂດຍມອບພວກເຂົາໄວ້ໃຕ້ອຳນາດຂອງສັດຕູ ດັ່ງນັ້ນ ຜູ້
ທີ່ເປັນຝ່າຍຊະນະ ໄດ້ນຳພວກເຂົາໄປເປັນຊະເລີຍໃນປະເທດອື່ນ ບໍ່ວ່າໃກ້ ຫລືໄກ. 47ຢູ່ໃນ
ປະເທດທີ່ພວກເຂົາຖືກຈັບໄປເປັນຊະເລີຍ ເມື່ອພວກເຂົາສຳນຶກຜິດ ແລະກັບໃຈ ໂດຍໄຫວ້
ວອນຕໍ່ພຣະອົງວ່າ, "ພວກຂ້ານ້ອຍເປັນຄົນບາບ ແລະໄດ້ເຮັດໃນທາງທີ່ຜິດ ແລະທາງຊົ່ວຊ້າ.
48ຖ້າພວກເຂົາກັບໃຈມາຫາພຣະອົງອີກ ດ້ວຍຄວາມສຸດຈິດສຸດໃຈ ແລະປິ່ນໜ້າອ້ອນວອນຫາ
ພຣະວິຫານຂອງ**ພຣະຜູ້ເປັນເຈົ້າ** ບ່ອນທີ່ຂ້ານ້ອຍໄດ້ສ້າງສຳລັບພຣະອົງໃນແຜ່ນດິນທີ່ພຣະອົງ
ຊົງປະທານໃຫ້ແກ່ປູ່ຍ່າຕາຍາຍຂອງພວກເຂົາ ແລະເມືອງທີ່ພຣະອົງຊົງເລືອກໄວ້ ເຖິງແມ່ນວ່າ
ພວກເຂົາອາໄສຢູ່ໃນແຜ່ນດິນຂອງສັດຕູທີ່ຈັບພວກເຂົາໄປນັ້ນກໍຕາມ. 49ພຣະອົງຜູ້ຊົງປະທັບຢູ່
ເທິງສະຫວັນຊັ້ນຟ້າ ຂໍພຣະອົງຊົງຮັບຟັງເທີ້ນ. 50ຂໍຊົງອະໄພບາບ ແລະການກະບົດທຸກຢ່າງ
ທີ່ໄພ່ພົນຂອງພຣະອົງກະທຳຕໍ່ພຣະອົງ ຂໍໂຜດໃຫ້ສັດຕູຂອງພວກເຂົາລ້ຽງເກືອພວກເຂົາດ້ວຍ

ຄວາມເມດຕາ. [51]ເພາະວ່າພວກເຂົາເປັນໄພ່ພົນຂອງພຣະອົງ ຊຶ່ງພຣະອົງໄດ້ນຳອອກມາຈາກ
ປະເທດເອຢິບ ທີ່ເປັນເໝືອນເຕົາເຜົາໂລຫະນັ້ນ.
[52]ຂ້າແດ່ພຣະຜູ້ເປັນເຈົ້າ ເມື່ອໃດຂ້າໃຊ້ຂອງພຣະອົງພ້ອມທັງຊາວອິສຣາເອນທີ່ເປັນໄພ່ພົນ
ຂອງພຣະອົງ ຮ້ອງຫາພຣະອົງ ຂໍຈົ່ງຊົງສະດັບຮັບຟັງຄຳໄຫວ້ວອນຂອງພວກເຂົາດ້ວຍ.
[53]ເພາະພຣະອົງໄດ້ຊົງແຍກພວກເຂົາອອກຈາກທ່າມກາງຊົນຊາດທັງຫລາຍໃນໂລກນີ້ ເພື່ອໃຫ້
ພວກເຂົາເປັນພວກຂອງພຣະອົງ ຕາມທີ່ພຣະອົງໄດ້ແຈ້ງໃຫ້ຮູ້ໂດຍຜ່ານທ່ານໂມເຊຜູ້ຮັບໃຊ້
ຂອງພຣະອົງ ໃນເວລາທີ່ພຣະອົງໄດ້ຊົງນຳພວກປູ່ຍ່າຕາຍາຍຂອງພວກຂ້ານ້ອຍອອກມາຈາກ
ປະເທດເອຢິບນັ້ນ.

## ໂຊໂລໂມນອວຍພອນປະຊາຊົນ

[54]ເວລາໂຊໂລໂມນອ້ອນວອນ ພຣະອົງໄດ້ຊຸເຂົ່າແລະຍົກມືຂຶ້ນສູ່ສະຫວັນຕໍ່ໜ້າແທ່ນບູຊາ
ຂອງພຣະຜູ້ເປັນເຈົ້າ ເມື່ອພຣະອົງອ້ອນວອນຂໍສິ້ນສຸດລົງແລ້ວ ພຣະອົງຊົງລຸກຂຶ້ນ. [55]ພຣະອົງ
ຊົງຢືນຂຶ້ນຂໍພຣະພອນຈາກພຣະເຈົ້າ ແກ່ຊຸມນຸມຊົນອິສຣາເອນທັງໝົດດ້ວຍສຽງດັງໆ ວ່າ,
[56]ສາທຸການແດ່ພຣະຜູ້ເປັນເຈົ້າຜູ້ຊົງອະນຸຍາດໃຫ້ໄພ່ພົນອິສຣາເອນຂອງພຣະອົງມີຄວາມສະ-
ຫງົບສຸກ ຊຶ່ງເປັນໄປຕາມຄຳສັນຍາທຸກຢ່າງຂອງພຣະອົງ ພຣະອົງຊົງຮັກສາຄຳສັນຍາທຸກຢ່າງ
ທີ່ມີແກ່ໂມເຊຜູ້ຮັບໃຊ້ຂອງພຣະອົງ. [57]ຂໍພຣະຜູ້ເປັນເຈົ້າຂອງພວກຂ້ານ້ອຍຊົງສະຖິດຢູ່ກັບ
ພວກເຮົາ ດັ່ງທີ່ພຣະອົງໄດ້ຊົງສະຖິດຢູ່ກັບພວກປູ່ຍ່າຕາຍາຍຂອງພວກຂ້ານ້ອຍ ຂໍຢ່າຊົງປະຖິ້ມ
ພວກຂ້ານ້ອຍເລີຍ. [58]ພຣະອົງຊົງດັດແປງຈິດໃຈຂອງພວກຂ້ານ້ອຍ ໃຫ້ມາຫາພຣະອົງ ເພື່ອວ່າ
ພວກຂ້ານ້ອຍຈະເດີນຕາມວິຖີທາງທຸກຢ່າງຂອງພຣະອົງ ແລະຖືຮັກສາພະບັນຍັດກັບກົດລະ-
ບຽບທີ່ພຣະອົງຊົງປະທານໃຫ້ແກ່ປູ່ຍ່າຕາຍາຍຂອງພວກຂ້ານ້ອຍ. [59]ຂໍໃຫ້ຄຳເວົ້າເຫລົ່ານີ້ຂອງ
ຂ້ານ້ອຍ ທີ່ໄຫວ້ວອນຂໍຕໍ່ພຣະພັກພຣະຜູ້ເປັນເຈົ້າ ຈົ່ງຝັງຢູ່ກັບພຣະອົງຕະຫລອດວັນເວລາ ຂໍ
ໃຫ້ພຣະອົງຊົງເມດຕາແກ່ປະຊາຊົນອິສຣາເອນ ພ້ອມທັງບັນດາເຈົ້າຊີວິດຂອງພວກເຂົາ ຕາມ
ຄວາມຕ້ອງການປະຈຳວັນຂອງພວກເຂົາ. [60]ເພື່ອວ່າ ຊົນຊາດຕ່າງໆ ໃນໂລກນີ້ຈະໄດ້ມາຮູ້ຈັກ
ວ່າ ພຣະຜູ້ເປັນເຈົ້າເທົ່ານັ້ນທີ່ຊົງເປັນພຣະເຈົ້າ ແລະບໍ່ມີພຣະເຈົ້າອົງອື່ນອີກ. [61]ຂໍໃຫ້ຈິດໃຈ
ຂອງພວກເຂົາບໍລິສຸດຕໍ່ພຣະຜູ້ເປັນເຈົ້າຂອງພວກເຮົາ ໃຫ້ຂັບຕາມພຣະບັນຍັດ ແລະພຣະຄຳ
ສັ່ງດັ່ງທຸກມື້ນີ້.

## ການອຸທິດຖວາຍພຣະວິຫານແດ່ພຣະຜູ້ເປັນເຈົ້າ

[62]ແລ້ວເຈົ້າຊີວິດພ້ອມທັງພວກອິສຣາເອນທຸກຄົນກໍຖວາຍເຄື່ອງບູຊາຕໍ່ພຣະພັກພຣະຜູ້ເປັນ-
ເຈົ້າ. [63]ເຈົ້າຊີວິດໂຊໂລໂມນໄດ້ຖວາຍງົວຊາວສອງພັນໂຕ ແລະແກະຮ້ອຍຊາວພັນໂຕ ຊຶ່ງເປັນ
ການຖວາຍເພື່ອຄວາມສາມັກຄີ ດ້ວຍຢ່າງນີ້ ພຣະອົງ ແລະພວກອິສຣາເອນທຸກຄົນກໍອຸທິດ
ຖວາຍພຣະວິຫານແດ່ພຣະຜູ້ເປັນເຈົ້າ. [64]ໃນມື້ນັ້ນ ເຈົ້າຊີວິດໄດ້ອຸທິດຖວາຍໃຈກາງເດີ່ນພຣະ-
ວິຫານ ໃນບ່ອນນີ້ພຣະອົງໄດ້ຖວາຍເຄື່ອງເຜົາບູຊາ ຖວາຍເຂົ້າ ແລະຖວາຍຕ່ອນໄຂມັນຂອງ
ເຄື່ອງຖວາຍ ເພື່ອຄວາມສາມັກຄີ ແທ່ນບູຊາທອງຄຳຢູ່ໃນເດີ່ນພຣະວິຫານນັ້ນນ້ອຍໂພດ ທີ່ຈະ
ບັນຈຸເຄື່ອງບູຊາເຫລົ່ານີ້. [65]ດັ່ງນັ້ນ ເຈົ້າຊີວິດໂຊໂລໂມນພ້ອມດ້ວຍອິສຣາເອນກໍຈັດງານສະ-

ຫລວງຢູ່ຕູບຂຶ້ນ ໄດ້ມີຝູງຊົນຈຳນວນຫລາຍຄົນຈາກທົ່ວທັງປະເທດ ຕັ້ງແຕ່ເມືອງຮາມັດຈົນ
ຮອດເຂດປະເທດເອຢິບ ພວກເຂົາໄດ້ພາກັນມາຢູ່ຊ້ອງພຣະພັກພຣະຜູ້ເປັນເຈົ້າ ເປັນເວລາ
ເຈັດມື້ເຈັດຄືນ. 66ແລ້ວໃນມື້ທີແປດ ພຣະອົງກໍບອກໃຫ້ປະຊາຊົນກັບຄືນເມືອ ຍ້ອນຄວາມດີທີ່
ພຣະຜູ້ເປັນເຈົ້າຊົງມີຕໍ່ກະສັດດາວິດ ແລະຕໍ່ໄພ່ພົນອິສຣາເອນ ພວກເຂົາຈຶ່ງຖວາຍພອນແດ່
ເຈົ້າຊີວິດ ແລ້ວກັບຄືນເມືອເມືອງດ້ວຍຄວາມມ່ວນຊື່ນ.

# ບົດທີ 9

## ພຣະຜູ້ເປັນເຈົ້າຊົງປະກົດເທື່ອທີສອງຕໍ່ໂຊໂລໂມນ

1ເມື່ອເຈົ້າຊີວິດໂຊໂລໂມນ ໄດ້ສ້າງພຣະວິຫານຂອງພຣະຜູ້ເປັນເຈົ້າ ແລະພະລາຊະວັງ
ພ້ອມດ້ວຍທຸກສິ່ງທີ່ພະອົງຕ້ອງການຈະສ້າງນັ້ນສຳເລັດແລ້ວ. 2ພຣະຜູ້ເປັນເຈົ້າກໍຊົງປະກົດຕໍ່
ພະອົງເປັນເທື່ອທີສອງ ດັ່ງທີ່ໄດ້ປະກົດຕໍ່ພຣະອົງທີ່ເມືອງກິເບໂອນ. 3ພຣະຜູ້ເປັນເຈົ້າຊົງກ່າວ
ຕໍ່ເພິ່ນວ່າ, "ເຮົາໄດ້ຍິນຄຳອ້ອນວອນຂອງເຈົ້າແລ້ວ ເຮົາຂໍຮັບເອົາພຣະວິຫານທີ່ເຈົ້າໄດ້ສ້າງນີ້
ໃຫ້ເປັນສະຖານທີ່ສັກສິດ ແລະເຮົາຈະສະຖິດຢູ່ທີ່ນັ້ນຕະຫລອດໄປ ເຮົາຈະເບິ່ງແຍງຮັກສາຕະ-
ຫລອດເວລາ. 4ຖ້າເຈົ້າຮັບໃຊ້ເຮົາດ້ວຍຄວາມຍຸດຕິທຳ ແລະຄວາມສັດຊື່ດັ່ງດາວິດພໍ່ຂອງເຈົ້າ
ໂດຍປະຕິບັດທຸກສິ່ງທີ່ເຮົາສັ່ງ ແລະຖືຮັກສາພຣະບັນຍັດກັບຄຳສັ່ງຂອງເຮົາ. 5ເຊື້ອສາຍຂອງ
ເຈົ້າຈະໄດ້ປົກຄອງອິສຣາເອນຕະຫລອດໄປ ຕາມທີ່ເຮົາໄດ້ສັນຍາກັບດາວິດ ພໍ່ຂອງເຈົ້າວ່າ,
"ເຈົ້າຈະບໍ່ຂາດແຄນຜູ້ທີ່ນັ່ງບັນລັງອິສຣາເອນນີ້ຈັກເທື່ອ."

6ຖ້າວ່າເຈົ້າ ແລະພວກລູກຫລານຂອງເຈົ້າຫັນຫລັງໃສ່ເຮົາ ແລະໄປຮັບໃຊ້ພະອື່ນ ແລະນະ-
ມັດສະການພະເຫລົ່ານັ້ນ ຊຶ່ງເປັນການບໍ່ຖືຮັກສາພຣະບັນຍັດ ແລະພຣະຄຳທີ່ເຮົາຕັ້ງໄວ້. 7ເຮົາ
ຈະຕັດພວກອິສຣາເອນອອກຈາກແຜ່ນດິນທີ່ເຮົາໄດ້ມອບໃຫ້ພວກເຂົາ ເຮົາຈະປະຖິ້ມພຣະວິ-
ຫານຊຶ່ງເຮົາຖືເປັນສະຖານທີ່ສັກສິດສຳລັບເຮົາ ຊົນຊາດຕ່າງໆ ຈະລັງກຽດແລະເຍາະເຍີ້ຍ
ພວກອິສຣາເອນ ວິຫານນີ້ຈະກາຍເປັນກອງຫີນເພພັງ. 8ທຸກຄົນທີ່ຜ່ານກາຍມາກໍຈະງຶດ ພວກ
ເຂົາຈະຜິວປາກແລະເວົ້າວ່າ, "ເປັນຫຍັງພຣະຜູ້ເປັນເຈົ້າຈຶ່ງເຮັດໃຫ້ເມືອງ ແລະພຣະວິຫານ
ເປັນດັ່ງນີ້?" 9ແລະພວກອື່ນກໍຈະຕອບວ່າ, "ຍ້ອນວ່າ ພວກອິສຣາເອນໄດ້ປະຖິ້ມພຣະຜູ້ເປັນ-
ເຈົ້າຂອງພວກເຂົາ ຜູ້ຊົງນຳພວກປູ່ຍ່າຕາຍາຍຂອງພວກເຂົາອອກມາຈາກປະເທດເອຢິບ ພວກ
ເຂົາໄດ້ຂາບໄຫວ້ ແລະຮັບໃຊ້ພະອື່ນ ຢ່າງນີ້ແຫລະ ພຣະຜູ້ເປັນເຈົ້າຈຶ່ງໄດ້ນຳເອົາເຫດຮ້າຍ
ເຫລົ່ານີ້ມາຕົກຖືກພວກເຂົາ."

## ກິດຕິສັບຂອງໂຊໂລໂມນຊ່າລືໄປທົ່ວ[ກ]

10ຢູ່ມາເມື່ອຄົບຊາວປີຖ້ວນຊຶ່ງໂຊໂລໂມນໄດ້ກໍ່ສ້າງອາຄານສອງຫລັງ ຄືພຣະວິຫານຂອງ
ພຣະຜູ້ເປັນເຈົ້າ ແລະລາຊະວັງຂອງກະສັດ 11(ຮີຣາມກະສັດເມືອງຕີເຣໄດ້ສົ່ງໄມ້ສົນໄມ້ແປກ
ແລະຄຳໃຫ້ແກ່ໂຊໂລໂມນຕາມທີ່ພະອົງມີຄວາມຕ້ອງການແລ້ວ) ກະສັດໂຊໂລໂມນຈຶ່ງໄດ້ປະ-
ທານຫົວເມືອງໃນແຜ່ນດິນຄາລິເລໃຫ້ແກ່ຮີຣາມຊາວຫົວເມືອງ 12ແຕ່ເມື່ອຮີຣາມສະເດັດຈາກ

[ກ]2ຂຄວ 8:1–18

ເມືອງ ຕີເຣ ເພື່ອໄປຊົມເບິ່ງຫົວເມືອງ ຊຶ່ງ ໂຊໂລໂມນ ໄດ້ໃຫ້ແກ່ເພິ່ນນັ້ນ ບັນດາຫົວເມືອງເຫລົ່າ-
ນັ້ນກໍບໍ່ເປັນທີ່ພໍໃຈຕົນ 13ເພາະສະນັ້ນ ເພິ່ນຈຶ່ງກ່າວວ່າ “ພີ່ນ້ອງເອີຍ ເມືອງທີ່ພະອົງໄດ້ມອບໃຫ້
ແກ່ຂ້າພະເຈົ້ານັ້ນ ເປັນ ເມືອງ ແນວໃດ?” ແລະພວກ ເຂົາ ໄດ້ ເອີ້ນຊື່ ເມືອງ ເຫລົ່ານັ້ນວ່າ ແຜ່ນດິນ
ກາບູນ ຈົນເຖິງທຸກມື້ນີ້ 14ຮີຣາມ ໄດ້ສົ່ງຄຳໜຶ່ງຮ້ອຍຊາວຕະລັນຕົນ[ກ] ໃຫ້ແກ່ກະສັດ ໂຊໂລໂມນ.

15ນີ້ເປັນເລື່ອງ ແຮງງານຊຶ່ງກະສັດ ໂຊໂລໂມນ ໄດ້ເກນ ເອົາເພື່ອກໍ່ສ້າງພຣະວິຫານຂອງ ພຣະ-
ຜູ້ເປັນເຈົ້າ ແລະ ລາຊະວັງຂອງຕົນ ພ້ອມທັງປ້ອມ ມິນໂລ ແລະກຳແພງ ເມືອງ ເຢຣູຊາເລັມ,
ຮາໂຊ, ເມກິດໂດ ແລະ ເກເຊ 16ຟາຣາໂອ ກະສັດ ເອຢິບ ໄດ້ຍົກທັບຂຶ້ນມາຍຶດເມືອງ ເກເຊ ແລະ
ເອົາໄຟເຜົາ ແລະໄດ້ຂ້າຄົນ ການາອານ ຊຶ່ງຢູ່ໃນເມືອງນັ້ນ ແລະໄດ້ຍົກເມືອງນັ້ນໃຫ້ແກ່ລູກສາວ
ຂອງພະອົງຜູ້ເປັນມະເຫສີຂອງ ໂຊໂລໂມນ 17ໂຊໂລໂມນ ຈຶ່ງໄດ້ກໍ່ສ້າງ ເກເຊ ຂຶ້ນໃໝ່ ແລະສ້າງ
ເມືອງ ເບັດ-ໂຮໂຮນ ເບື້ອງລຸ່ມ 18ທັງ ເມືອງ ບາອາລາດ ແລະເມືອງ ຕາມາ ໃນຖິ່ນແຫ້ງແລ້ງກັນ-
ດານໃນແຜ່ນດິນ 19ທັງບັນດາຫົວເມືອງສຳລັບສາງເຄື່ອງທີ່ ໂຊໂລໂມນ ມີຢູ່ ແລະຫົວເມືອງສຳ-
ລັບລົດຮົບຂອງພະອົງ ແລະຫົວເມືອງ ສຳລັບທະຫານມ້າຂອງພະອົງ ແລະສິ່ງສາລະພັດຊຶ່ງ
ໂຊໂລໂມນ ມີຈຸດປະສົງຈະສ້າງໃນ ເມືອງ ເຢຣູຊາເລັມ ໃນພູ ເລບານອນ ແລະທົ່ວແຜ່ນດິນທີ່ຢູ່ໃນ
ອານາຈັກຂອງພະອົງ 20ປະຊາຊົນທັງປວງຊຶ່ງເຫລືອຢູ່ຈາກຄົນ ອະໂມຣິດ ຄົນ ຮິດຕີ ຄົນ ເປຣີຊີ
ຄົນ ຮີວີ ແລະຄົນ ເຢບຸດ ຜູ້ຊຶ່ງບໍ່ແມ່ນຄົນ ອິສຣາເອນ 21ລູກຫລານຂອງພວກເຂົາທີ່ເຫລືອຢູ່ໃນ
ແຜ່ນດິນ ຊຶ່ງປະຊາຊົນ ອິສຣາເອນ ບໍ່ສາມາດຈະທຳລາຍໃຫ້ໝົດໄດ້ ບຸກຄົນເຫລົ່ານີ້ ໂຊໂລໂມນ
ໄດ້ເກນໃຫ້ໄປເປັນຂ້າທາດຈົນເຖິງທຸກມື້ນີ້ 22ແຕ່ລູກຫລານ ອິສຣາເອນ ນັ້ນ ໂຊໂລໂມນບໍ່ໄດ້ໃຫ້
ເປັນຂ້າທາດ ໃຫ້ພວກເຂົາເປັນທະຫານ ເປັນຂ້າລາຊະການ ເປັນຜູ້ບັງຄັບບັນຊາຂອງພະອົງ
ເປັນນາຍທະຫານ ເປັນຜູ້ບັງຄັບບັນຊາລົດຮົບ ແລະເປັນທະຫານຂີ່ມ້າຂອງພະອົງ 23ຈຳນວນ
ເຈົ້າໜ້າທີ່ຊັ້ນຜູ້ໃຫຍ່ທີ່ປະຈຳການຂອງ ໂຊໂລໂມນ ມີຈຳນວນຫ້າຮ້ອຍຫ້າສິບຄົນ ເປັນຜູ້ທີ່ມີອຳ-
ນາດໃນ ເບິ່ງແຍງປະຊາຊົນທີ່ເຮັດວຽກ 24ແຕ່ລູກສາວຂອງ ຟາຣາໂອ ໄດ້ຍ້າຍຈາກ ເມືອງ ດາວິດ
ໄປຫາຕຳໜັກຂອງພະນາງເອງ ຊຶ່ງ ໂຊໂລໂມນ ໄດ້ສ້າງໃຫ້ແກ່ນາງ ແລ້ວພະອົງຈຶ່ງສ້າງປ້ອມ
ມິນໂລ.

25ໂຊໂລໂມນ ໄດ້ຖວາຍເຄື່ອງເຜົາບູຊາ ແລະເຄື່ອງບູຊາໂມທະນາພຣະຄຸນເທິງແທ່ນບູຊາ ຊຶ່ງ
ພະອົງໄດ້ສ້າງຖວາຍແດ່ ພຣະຜູ້ເປັນເຈົ້າປີລະສາມເທື່ອ ແລະໄດ້ເຜົາເຄື່ອງຫອມເທິງແທ່ນບູຊາ
ຕໍ່ພຣະພັກ ພຣະຜູ້ເປັນເຈົ້າ ດັ່ງນັ້ນ ພະອົງຈຶ່ງສ້າງພຣະວິຫານຈົນສຳເລັດ.

26ກະສັດ ໂຊໂລໂມນ ໄດ້ກໍ່ສ້າງກອງທັບເຮືອທີ່ ເອັດຊີໂອນ-ເກເບ ທີ່ຢູ່ໃກ້ ເອລັດ ແຄມຝັ່ງທະເລ
ແດງໃນແຜ່ນດິນ ເອໂດມ 27ແລະ ຮີຣາມ ໄດ້ສົ່ງຂ້າລາຊະການ ແລະທະຫານເຮືອຜູ້ຊຶ່ງຄຸ້ນເຄີຍ
ກັບທະເລໄປກັບກອງທັບກຳປັ່ນພ້ອມກັບຂ້າລາຊະການຂອງກະສັດ ໂຊໂລໂມນ 28ພວກເຂົາໄດ້
ໄປຮອດເມືອງ ໂອຟີ ແລະນຳເອົາຄຳມາຈາກບ່ອນນັ້ນ ຈຳນວນສີ່ຮ້ອຍຊາວຕະລັນຕົນ[ຂ] ແລະ
ໄດ້ນຳມາຖວາຍແກ່ກະສັດ ໂຊໂລໂມນ.

[ກ]ເກືອບເຖິງສີ່ພັນ kg [ຂ]ໜັກກວ່າສິບສີ່ໂຕນ

# ບົດທີ 10

## ພະລາຊິນີປະເທດເຊບາສະເດັດມາຢ້ຽມຢາມ ໂຊໂລໂມນ

1ຊື່ສຽງຂອງເຈົ້າ ໂຊໂລໂມນ ໄດ້ຊ່າລືໄປເຖິງພະລາຊິນີແຫ່ງປະເທດ ເຊບາ ພະນາງຈຶ່ງສະ-
ເດັດມາຖາມບັນຫາ ເລິກ ແລບຫລາຍຢ່າງກັບພະອົງ. 2ພະນາງ ໄດ້ສະເດັດ ໄປກຸງ ເຢຣູຊາເລັມ
ຊຶ່ງຕິດຕາມດ້ວຍຂ້າໃຊ້ຈຳນວນຫລວງຫລາຍ ພ້ອມທັງຝູງອູດບັນທຸກຊັບສົມບັດອັນມະຫາສານ
ເຊັ່ນວ່າ ເຄື່ອງເທດ ຄຳຢ່າງຫລວງຫລາຍ ແລະເພັດ ເມື່ອທັງສອງພົບກັນ ພະນາງກໍຖາມບັນ-
ຫາຫລາຍຢ່າງທີ່ຄິດໄວ້ກັບພະອົງ. 3ເຈົ້າ ໂຊໂລໂມນ ໄດ້ຕອບຄຳຖາມຂອງພະນາງທຸກຂໍ້ ໂດຍບໍ່
ມີຂໍ້ໃດຂ້ອງຄາເລີຍ. 4ເມື່ອພະລາຊິນີແຫ່ງ ເຊບາ ຮູ້ເຫັນຄວາມສະຫລຽວສະຫລາດຂອງເຈົ້າ ໂຊ-
ໂລໂມນ ພ້ອມທັງພະລາຊະວັງທີ່ພະອົງຊົງສ້າງ. 5ອາຫານການກິນຢູ່ເທິງໂຕະ ຄວາມເປັນລະ-
ບຽບຮຽບຮ້ອຍຂອງພວກຂ້າລາຊາການ ໜ້າທີ່ຂອງພວກຂ້າໃຊ້ຕະຫລອດທັງ ເຄື່ອງ ແຕ່ງກາຍ
ຂອງພວກເຂົາ ພວກພະນັກງານເຄື່ອງດື່ມ ແລະເຄື່ອງເຜົາບູຊາຢູ່ໃນພຣະວິຫານຂອງ ພຣະຜູ້-
ເປັນເຈົ້າ ພະນາງກໍຕົກພະໄທໃນທັນທີ 6ແລະທູນຕໍ່ເຈົ້າຊີວິດວ່າ, “ທຸກສິ່ງກ່ຽວກັບເລື່ອງຂອງ
ພະອົງ ທັງຄວາມສະຫລຽວສະຫລາດຂອງພະອົງ ທີ່ຂ້ານ້ອຍໄດ້ຍິນເວລາທີ່ຂ້ານ້ອຍຍັງຢູ່ໃນ
ເມືອງຂອງຂ້ານ້ອຍ ກໍເປັນຄວາມຈິງໝົດ. 7ແຕ່ຂ້ານ້ອຍບໍ່ໄດ້ເຊື່ອໃນຄຳເວົ້າຂອງພວກເຂົາ ຈົນ
ຂ້ານ້ອຍໄດ້ເຫັນດ້ວຍຕົນເອງ ສະຕິປັນຍາ ແລະຄວາມຮັ່ງມີສົມບູນຂອງພະອົງທີ່ຂ້ານ້ອຍໄດ້ຍິນ
ມາ ມີພຽງເຄິ່ງໜຶ່ງໃນສິ່ງທີ່ຂ້ານ້ອຍໄດ້ຮູ້ ແລະໄດ້ເຫັນໃນເວລານີ້. 8ພະມະເຫສີ ແລະພວກຂ້າ
ໃຊ້ຂອງພະອົງ ຄົງມີຄວາມສຸກຫລາຍທີ່ໄດ້ຢູ່ໃກ້ຊິດພະອົງ. 9ສາທຸການ ແດ່ ພຣະຜູ້ເປັນເຈົ້າ
ຂອງພະອົງ ຜູ້ຊົງມອບສະຫງ່າລາສີ ແລະໃຫ້ພະອົງປະທັບເທິງພະທີ່ນັ່ງຂອງ ອິສຣາເອນ ຍ້ອນ
ພຣະຜູ້ເປັນເຈົ້າ ຊົງມີຄວາມຮັກຕໍ່ ອິສຣາເອນ ຕະຫລອດໄປ ຈຶ່ງໄດ້ແຕ່ງຕັ້ງພະອົງໃຫ້ເປັນເຈົ້າຊີ-
ວິດ ເພື່ອປົກຄອງຢ່າງຍຸດຕິທຳ ແລະຖືກຕ້ອງ. 10ແລ້ວພະລາຊິນີກໍຖວາຍຄຳໜັກເກືອບຫ້າໂຕນ
ແດ່ພະລາຊາພ້ອມທັງເຄື່ອງຫອມ ແລະເພັດຢ່າງຫລວງຫລາຍ ເຄື່ອງຫອມອັນຫລວງຫລາຍ ທີ່
ພະລາຊິນີແຫ່ງ ເຊບາ ເອົາມາຖວາຍໃຫ້ເຈົ້າຊີວິດ ໂຊໂລໂມນ ນີ້ ບໍ່ເຄີຍມີໃຜມາຖວາຍໃຫ້ຫລວງ-
ຫລາຍຢ່າງນີ້ຈັກເທື່ອເລີຍ. 11ນອກຈາກນີ້ ຍັງມີຂະບວນກຳປັ່ນຂອງເຈົ້າ ຮີຣາມ ໄດ້ບັນທຸກຄຳ
ມາຈາກ ໂອຟີ ທັງໄດ້ເອົາໄມ້ຈັນຢ່າງຫລວງຫລາຍ ແລະເພັດອີກດ້ວຍ. 12ເຈົ້າຊີວິດໄດ້ເອົາໄມ້
ຈັນນີ້ເຮັດເສົາຄ້ຳພຣະວິຫານ ເສົາຄ້ຳພະລາຊະວັງ ແລະເຮັດພິນໃຫ້ນັກດົນຕີ ຕະຫລອດທຸກມື້ນີ້
ບໍ່ເຄີຍເຫັນໄມ້ຈັນຢ່າງນີ້ຈັກເທື່ອ. 13ເພື່ອເປັນການຕອບແທນ ເຈົ້າ ໂຊໂລໂມນ ໄດ້ພະລາຊະທານ
ຫລາຍສິ່ງໃຫ້ພະລາຊິນີແຫ່ງ ເຊບາ ຕາມເຄື່ອງອັນອຸດົມສົມບູນທີ່ພະອົງມີຢູ່ ແລະພະອົງຍັງໄດ້
ພະລາຊະທານຕື່ມອີກຕາມທີ່ພະນາງຕ້ອງການ ແລ້ວພະນາງພ້ອມທັງບັນດາເສນາອາມາດກໍກັບ
ຄືນສູ່ປະເທດຂອງຕົນ.

## ຊັບສົມບັດ ແລະຄວາມຈະເລີນຮຸ່ງເຮືອງຂອງໂຊໂລໂມນ[ກ]

14ນ້ຳໜັກຂອງຄຳທີ່ໄດ້ນຳສົ່ງມາໃຫ້ກະສັດ ໂຊໂລໂມນ ໃນປີໜຶ່ງນັ້ນ ເປັນຄຳຫົກຮ້ອຍຫົກສິບ
ຫົກຕະລັນຕົນ 15ນອກຈາກຄຳທີ່ມາຈາກພວກພໍ່ຄ້າ ແລະຈາກການຄ້າຂອງພວກພໍ່ຄ້າ ແລະ

[ກ]2ຂຄວ 9:13–28

ຈາກກະສັດທັງປວງຂອງປະເທດ ອາລະເບຍ ແລະຈາກບັນດາເຈົ້າເມືອງແຫ່ງແຜ່ນດິນ 16ກະ-
ສັດ ໂຊໂລໂມນ ໄດ້ຕີຄຳເພື່ອສ້າງໂລ່ໃຫຍ່ສອງຮ້ອຍອັນດ້ວຍຄຳ, ໂລ່ອັນໜຶ່ງໃຊ້ຄຳຫົກຮ້ອຍເຊ
ເຂ 17ແລະພະອົງໄດ້ຕີຄຳເພື່ອເຮັດໂລ່ສາມຮ້ອຍອັນ ໂລ່ອັນໜຶ່ງໃຊ້ຄຳສາມມາເນ ແລະກະສັດ
ໄດ້ເກັບໂລ່ໄວ້ໃນຕຳໜັກໃນປ່າ ເລບານອນ.

18ກະສັດໄດ້ເຮັດບ່ອນນັ່ງງາຊ້າງຂະໜາດໃຫຍ່ດ້ວຍ ແລະໄດ້ໂອບດ້ວຍຄຳຢ່າງງາມທີ່ສຸດ
19ບ່ອນນັ່ງນັ້ນມີຂັ້ນໄດຫົກຂັ້ນ ແລະຍອດທາງຫລັງຂອງບ່ອນນັ່ງນັ້ນມົນຂ້າງເທິງ ແລະສອງ
ຂ້າງພະທີ່ນັ່ງມີບ່ອນວາງພະຫັດ ມີຮູບສິງໃຫຍ່ສອງໂຕຢືນຢູ່ຂ້າງໆບ່ອນວາງພະຫັດ 20ມີຮູບສິງ
ໃຫຍ່ອີກສິບສອງໂຕຢືນຢູ່ບ່ອນນັ້ນ ເທິງຫົກຂັ້ນໄດທັງສອງຂ້າງ ເຂົາບໍ່ເຄີຍເຮັດບ່ອນນັ່ງແບບນີ້
ໃນລາຊະອານາຈັກໃດໆ.

21ພາຊະນະທັງໝົດສຳລັບເຄື່ອງດື່ມຂອງກະສັດ ໂຊໂລໂມນ ເຮັດດ້ວຍຄຳ ແລະພາຊະນະທັງ
ໝົດຂອງພະຕຳໜັກໃນດົງ ເລບານອນ ເຮັດດ້ວຍຄຳບໍລິສຸດບໍ່ມີອັນໃດທີ່ເຮັດດ້ວຍເງິນເລີຍ ເງິນ
ນັ້ນຖືວ່າເປັນຂອງບໍ່ມີຄ່າຫຍັງໃນສະໄໝຂອງ ໂຊໂລໂມນ 22ເພາະວ່າກະສັດມີກອງທັບເຮືອຈາກ
ເມືອງ ຕາຊິດ ເດີນທະເລພ້ອມກັບກອງທັບເຮືອຂອງ ຮີຣາມ ກອງທັບເຮືອເມືອງ ຕາຊິດ ໄດ້ບັນ-
ທຸກຄຳ ເງິນ ງາຊ້າງ ລິງ ແລະນົກຍູງມາ ສາມປີຕໍ່ເທື່ອ.

23ດັ່ງນີ້ ແຫລະ ກະສັດ ໂຊໂລໂມນ ຈຶ່ງໃຫຍ່ກວ່າບັນດາກະສັດອື່ນໆ ແຫ່ງ ແຜ່ນດິນ ໂລກ ໃນ
ເລື່ອງຊັບສົມບັດ ແລະສະຕິປັນຍາ 24ແລະທົ່ວທັງແຜ່ນດິນໂລກກໍສະແຫວງຫາທີ່ຈະເຂົ້າເຝົ້າ
ກະສັດ ໂຊໂລໂມນ ເພື່ອຈະຟັງສະຕິປັນຍາຊຶ່ງ ພຣະເຈົ້າ ຊົງພຣະລາຊະທານໄວ້ໃນໃຈຂອງພະ
ອົງ 25ທຸກຄົນໄດ້ນຳເຄື່ອງບັນນາການຂອງພວກເຂົາມາຖວາຍຊຶ່ງເປັນເຄື່ອງທີ່ເຮັດດ້ວຍເງິນ,
ເຄື່ອງເຮັດດ້ວຍຄຳ ເຄື່ອງແຕ່ງກາຍ ເຄື່ອງອາວຸດ ເຄື່ອງຫອມ ມ້າ ແລະລໍ ຕາມຈຳນວນກຳ-
ນົດທຸກໆປີ.

26ໂຊໂລໂມນໄດ້ສະສົມລົດຮົບ ແລະທະຫານມ້າ ພະອົງມີລົດຮົບໜຶ່ງພັນສີ່ຮ້ອຍຄັນ ແລະ
ທະຫານມ້າໜຶ່ງໝື່ນສອງພັນຄົນໂດຍທີ່ພະອົງໄດ້ໃຫ້ປະຈຳຢູ່ທີ່ຫົວເມືອງລົດຮົບ ແລະຢູ່ກັບກະ-
ສັດໃນເມືອງ ເຢຣູຊາເລັມ 27ແລະກະສັດເຮັດໃຫ້ເງິນນັ້ນເປັນສິ່ງຂອງທຳມະດາໃນເມືອງ ເຢຣູ-
ຊາເລັມ ເໝືອນກັບກ້ອນຫີນ ແລະໃຫ້ຕົ້ນໄມ້ ສົນມີຢ່າງຫລວງຫລາຍຄືກັບຕົ້ນໝາກເດື່ອທີ່ຢູ່
ຕາມທົ່ງພຽງ 28ແລະຝູງມ້ານັ້ນເປັນສິນຄ້າຂາເຂົ້າຂອງໂຊໂລໂມນຊຶ່ງມາຈາກ ເອຢິບ ພ້ອມດ້ວຍ
ເສັ້ນດ້າຍສຳລັບຜ້າປ່ານ ແລະບັນດາພໍ່ຄ້າຂອງກະສັດຮັບເສັ້ນດ້າຍສຳລັບຜ້າປ່ານນັ້ນມາຕາມ
ລາຄາກຳນົດໄວ້ 29ລົດຮົບຄັນໜຶ່ງທີ່ຈະນຳເຂົ້າມາຈາກ ເອຢິບ ແມ່ນໃນລາຄາເງິນຫົກຮ້ອຍເຊເຂ
ມ້າໂຕໜຶ່ງໜຶ່ງຮ້ອຍຫ້າສິບ ດັ່ງນັ້ນໂດຍ ທາງພວກພໍ່ຄ້າ ພວກເຂົາຈຶ່ງສົ່ງອອກໄປຍັງບັນດາກະ-
ສັດທັງຫລາຍຂອງຄົນຮິດຕີ ແລະບັນດາກະສັດຂອງຊີເຣຍ.

# ບົດທີ 11

## ມະເຫສີທັງຫລາຍຂອງໂຊໂລໂມນກາບໄຫວ້ຮູບເຄົາລົບ

1ແຕ່ກະສັດ ໂຊໂລໂມນ ໄດ້ຮັກຍິງສາວຊາວຕ່າງດ້າວຫລາຍຄົນ ນອກຈາກລູກສາວຂອງ ຟາ-

ຣາໂອ ຍັງມີພວກຜູ້ຍິງຄົນໂມອາບ, ຄົນອຳໂມນ, ຄົນເອໂດມ ຄົນຊີໂດນ ແລະຄົນຮິດຕີ
2ສຳລັບພວກຕ່າງດ້າວຊຶ່ງ ພຣະຜູ້ເປັນເຈົ້າ ໄດ້ບອກແກ່ພວກລູກຫລານ ອິສຣາເອນ ວ່າ "ເຈົ້າທັງ-
ຫລາຍຢ່າເຂົ້າ ໄປແຕ່ງງານກັບພວກເຂົາ ຫລືຢ່າໃຫ້ພວກເຂົາເຂົ້າມາແຕ່ງງານກັບພວກເຈົ້າ
ເພາະພວກເຂົາຈະຫັນຈິດໃຈຂອງເຈົ້າໄປຕາມພະຂອງພວກເຂົາຢ່າງແນ່ນອນ" ໂຊໂລໂມນ ໄດ້
ຕິດພັນກັບຄົນເຫລົ່ານີ້ດ້ວຍຄວາມຮັກ 3ພະອົງມີມະເຫສີເຈັດຮ້ອຍຄົນຊຶ່ງເປັນເຈົ້າຍິງ ແລະເມຍ
ນ້ອຍສາມຮ້ອຍຄົນ ແລະບັນດາມະເຫສີຂອງ ພະອົງໄດ້ຊັກຊວນໃຈຂອງພະອົງໃຫ້ຫລົງຜິດ 4ຢູ່
ມາເມື່ອ ໂຊໂລໂມນ ເຖົ້າແກ່ແລ້ວ ມະເຫສີຂອງພະອົງໄດ້ຊັກຊວນໃຈຂອງພະອົງໃຫ້ໄປຫາພະອື່ນ
ແລະຈິດໃຈຂອງເພິ່ນບໍ່ໄດ້ບໍລິສຸດຕໍ່ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງຕົນ ດັ່ງໃຈຂອງ ດາວິດ ພໍ່
ຂອງເພິ່ນທີ່ໄດ້ສັດຊື່ນັ້ນ 5ເພາະ ໂຊໂລໂມນ ໄດ້ດຳເນີນໄປຕາມ ພະອັດຊະໂຕເຣດ ຮູບພະຂອງຄົນ
ຊີໂດນ ແລະໄປນຳພະໂມເລັກ ສິ່ງທີ່ໜ້າ ກຽດໜ້າຊັງຂອງຄົນອຳໂມນ 6ໂຊໂລໂມນ ໄດ້ເຮັດ
ສິ່ງທີ່ຊົ່ວຮ້າຍໃນສາຍພຣະເນດຂອງ ພຣະຜູ້ເປັນເຈົ້າ ແລະບໍ່ໄດ້ຕິດຕາມ ພຣະຜູ້ເປັນເຈົ້າ ຢ່າງ
ເຕັມໃຈ ດັ່ງ ດາວິດ ພໍ່ຂອງເພິ່ນໄດ້ເຮັດຜ່ານມາແລ້ວນັ້ນ 7ແລ້ວ ໂຊໂລໂມນ ໄດ້ກໍ່ສ້າງປູຊະນີຍະ-
ສະຖານສູງສຳລັບ ພະເຄໂມດ ເປັນສິ່ງທີ່ໜ້າກຽດຊັງໃຫ້ແກ່ ໂມອາບ ໃນພູເຂົາທີ່ຢູ່ຖັດຈາກເມືອງ
ເຢຣູຊາເລັມ ແລະສຳລັບ ພະໂມເລັກ ສິ່ງທີ່ໜ້າກຽດຊັງຂອງຄົນ ອຳໂມນ 8ແລະພະອົງໄດ້ເຮັດ
ດັ່ງນັ້ນສຳລັບມະເຫສີຊາວຕ່າງດ້າວຂອງພະອົງທັງໝົດ ຜູ້ທີ່ໄດ້ເຜົາເຄື່ອງຫອມ ແລະຖວາຍ
ເຄື່ອງສັດບູຊາແກ່ບັນດາພະຂອງພວກເຂົາ.

## ພຣະເຈົ້າຊົງພຣະພິໂລດ ແລະລົງໂທດໂຊໂລໂມນ

9ພຣະຜູ້ເປັນເຈົ້າ ໂກດຮ້າຍຕໍ່ ໂຊໂລໂມນ ຍ້ອນໃຈຂອງ ເພິ່ນໄດ້ຫັນໜີໄປຈາກ ພຣະຜູ້ເປັນ-
ເຈົ້າ ພຣະເຈົ້າ ແຫ່ງ ອິສຣາເອນ ຜູ້ໄດ້ປາກົດແກ່ເພິ່ນສອງເທື່ອແລ້ວ 10ແລະໄດ້ສັ່ງເພິ່ນກ່ຽວກັບ
ເລື່ອງນີ້ ວ່າພະອົງບໍ່ຄວນໄປຕິດຕາມພະອື່ນ ແຕ່ພະອົງບໍ່ໄດ້ຮັກສາພຣະບັນຊາຂອງ ພຣະຜູ້-
ເປັນເຈົ້າ 11ດັ່ງນັ້ນ ພຣະຜູ້ເປັນເຈົ້າ ໄດ້ກ່າວກັບ ໂຊໂລໂມນ ວ່າ "ເນື່ອງຈາກເຈົ້າໄດ້ເຮັດເຊັ່ນນັ້ນ
ແລະເຈົ້າບໍ່ໄດ້ຖືຮັກສາຄຳໝັ້ນສັນຍາຂອງເຮົາ ແລະບັນຍັດທັງຫລາຍຂອງເຮົາ ຊຶ່ງເຮົາໄດ້ສັ່ງ
ແກ່ເຈົ້າໄວ້ ເຮົາຈະຍາດເອົາອານາຈັກຈາກເຈົ້າແນ່ນອນ ແລະຈະຍົກໃຫ້ແກ່ຂ້າລາຊະການຂອງ
ເຈົ້າ 12ເຖິງປານນັ້ນກໍດີ ເພາະເຫັນແກ່ ດາວິດ ພໍ່ຂອງເຈົ້າ ເຮົາຈະບໍ່ເຮັດໃນວັນເວລາຂອງເຈົ້າ
ແຕ່ເຮົາຈະຍາດອອກຈາກ ມືລູກຊາຍຂອງເຈົ້າ 13ຢ່າງໃດກໍດີ ເຮົາຈະບໍ່ຍາດເອົາອານາຈັກທັງ
ໝົດ ແຕ່ເຮົາຈະໃຫ້ຕະກູນໜຶ່ງ ແກ່ລູກຊາຍຂອງເຈົ້າ ເພື່ອເຫັນແກ່ ດາວິດ ຜູ້ຮັບໃຊ້ຂອງເຮົາ
ແລະເພື່ອເຫັນແກ່ ເຢຣູຊາເລັມ ຊຶ່ງເຮົາໄດ້ເລືອກໄວ້."

14ພຣະຜູ້ເປັນເຈົ້າ ໄດ້ໃຫ້ສັດຕູເກີດຂຶ້ນຕໍ່ສູ້ ໂຊໂລໂມນ ຄືຮາດັດ ຄົນ ເອໂດມ ເພິ່ນເປັນເຊື້ອ-
ສາຍ ແຫ່ງ ເອໂດມ 15ແລະຢູ່ມາເມື່ອ ດາວິດ ຢູ່ໃນແຂວງ ເອໂດມ ແລະ ໂຢອາບ ຜູ້ບັນຊາການ
ກອງທັບໄດ້ຂຶ້ນໄປຝັງສົບຜູ້ທີ່ຖືກຂ້າ ຫລັງຈາກພວກເຂົາໄດ້ຂ້າຜູ້ຊາຍທຸກຄົນໃນແຂວງ ເອໂດມ
16ອັນໜຶ່ງຍ້ອນ ໂຢອາບ ແລະຄົນ ອິສຣາເອນ ທັງໝົດຍັງຢູ່ບ່ອນນັ້ນລະຫວ່າງຫົກເດືອນ ຈົນ
ກວ່າພວກເຂົາໄດ້ຂ້າ ຜູ້ຊາຍທຸກຄົນໃນແຂວງ ເອໂດມ 17ເມື່ອນັ້ນ ຮາດັດ ໄດ້ປົບໜີໄປ ເອຢິບ
ພ້ອມກັບຄົນ ເອໂດມ ບາງຄົນຜູ້ເປັນຂ້າລາຊະການຂອງພໍ່ເພິ່ນ ເທື່ອນັ້ນ ຮາດັດ ຍັງເປັນເດັກ-

ນ້ອຍໆຢູ່ 18ແລະພວກເຂົາທັງຫລາຍໄດ້ຍ້າຍອອກຈາກເມືອງ ມີດີອານ ໄປໃນເມືອງ ປາຣານ
ແລະເອົາຄົນທີ່ມາຈາກ ປາຣານໄປກັບພວກເຂົາ ແລະໄດ້ໄປທີ່ເອຢິບ ເຂົ້າເຝົ້າຟາຣາໂອກະ-
ສັດແຫ່ງເອຢິບ ຜູ້ປະທານເຮືອນຫລັງໜຶ່ງແກ່ຮາດັດ ແລະກຳນົດໃຫ້ໄດ້ຮັບສະບຽງອາຫານ
ແລະປະທານທີ່ດິນໃຫ້ເພິ່ນດ້ວຍ 19ແລະຮາດັດເປັນທີ່ພໍໃຈຫລາຍໃນສາຍຕາຂອງຟາຣາໂອ
ຟາຣາໂອຈຶ່ງປະທານນ້ອງສາວຂອງມະເຫສີຂອງເພິ່ນເອງ ຄືນ້ອງສາວຂອງພະລາຊິນີຕາເປ-
ເນັດໃຫ້ເປັນເມຍຮາດັດ 20ແລະນ້ອງສາວຂອງຕາເປເນັດກໍປະສູດລູກຊາຍຊື່ເກນູບັດໃຫ້ເພິ່ນ
ຜູ້ຊຶ່ງຕາເປເນັດໃຫ້ປະຮ້າງນົມໃນວັງຂອງ ຟາຣາໂອ ແລະທ້າວເກນູບັດກໍໄດ້ຢູ່ໃນວັງຂອງ
ຟາຣາໂອໃນທ່າມກາງພວກລູກຊາຍຂອງຟາຣາໂອ 21ແຕ່ເມື່ອຮາດັດຢູ່ໃນເອຢິບໄດ້ຍິນຂ່າວ
ວ່າດາວິດໄດ້ລ່ວງລັບໄປຢູ່ກັບບັນພະບູລຸດຂອງຕົນແລ້ວ ແລະໂຢອາບຜູ້ບັນຊາການກອງທັບກໍ
ສິ້ນຊີວິດ ແລ້ວຮາດັດຈຶ່ງທູນຟາຣາໂອວ່າ “ຂໍຂ້ານ້ອຍທູນລາເພື່ອຂ້ານ້ອຍຈະກັບໄປປະເທດ
ຂອງຂ້ານ້ອຍເອງ.” 22ແຕ່ຟາຣາໂອກ່າວກັບເພິ່ນວ່າ “ເຈົ້າຢູ່ກັບເຮົາຂາດເຂີນສິ່ງໃດຈຶ່ງເຮັດໃຫ້
ເຈົ້າຊອກຫາທີ່ຈະກັບໄປຍັງບ້ານເມືອງຂອງເຈົ້າ” ແລະເພິ່ນກໍທູນຕອບກະສັດວ່າ “ບໍ່ຂາດເຂີນ
ສິ່ງໃດເລີຍ ແຕ່ຂໍໃຫ້ຂ້ານ້ອຍໄປເຖີດ.”

23ພຣະເຈົ້າໄດ້ໃຫ້ສັດຕູເກີດຂຶ້ນຕໍ່ສູ້ໂຊໂລໂມນອີກຄົນໜຶ່ງ ຄືເຣໂຊນລູກຊາຍຂອງເອລີອາ-
ດາຜູ້ທີ່ໜີໄປຈາກ ຮາດັດເອເຊີກະສັດແຫ່ງໂຊບາເຈົ້ານາຍຂອງຕົນ 24ເມື່ອດາວິດໄດ້ຂ້າກອງ-
ທັບໂຊບາ ພວກເຂົາກໍລວບລວມຄົນທັງຫລາຍທີ່ຢູ່ກັບພວກເຂົາ ແລະກາຍເປັນຫົວໜ້າຂອງ
ກອງປຸ້ນ ແລະພວກເຂົາທັງຫລາຍກໍໄປຍັງເມືອງດາມາເຊໂດຍອາໄສຢູ່ບ່ອນນັ້ນ ແລະປົກຄອງ
ເມືອງດາມາເຊ 25ເພິ່ນເປັນສັດຕູຂອງອິສຣາເອນຕະຫລອດວັນເວລາຂອງໂຊໂລໂມນ ນອກ-
ຈາກເຫດຮ້າຍທີ່ຮາດັດໄດ້ເຮັດ ແລະເພິ່ນກຽດຊັງອິສຣາເອນ ແລະໄດ້ປົກຄອງຢູ່ເໜືອປະເທດ
ຊີເຣຍ.

## ເຢໂຣໂບອາມຕໍ່ຕ້ານເຈົ້າຊີວິດໂຊໂລໂມນ

26ເຢໂຣໂບອາມລູກຊາຍຂອງເນບັດ ເປັນຄົນຕະກູນເອຟຣາຢິມທີ່ມາຈາກບ້ານເຊເຣດາ
ແມ່ຂອງລາວຊື່ວ່າເຊຣູອາ ລາວເປັນແມ່ໝ້າຍ ເຢໂຣໂບອາມເປັນຄົນໃນວົງລາຊະການຂອງ
ເຈົ້າໂຊໂລໂມນ ແຕ່ລາວໄດ້ກະບົດຕໍ່ພະອົງ. 27ເລື່ອງລາວການກະບົດຂອງເຢໂຣໂບອາມເປັນ
ດັ່ງນີ້: ເຈົ້າໂຊໂລໂມນໄດ້ສ້າງປ້ອມມິນໂລ ຢູ່ທາງເບື້ອງທິດຕາເວັນອອກຂອງນະຄອນເຢຣູຊາ-
ເລັມ ແລະໄດ້ອັດປ່ອງແຕກຂອງກຳແພງເມືອງຂອງດາວິດພໍ່ຂອງພະອົງ. 28ເຢໂຣໂບອາມເປັນ
ຊາຍໜຸ່ມທີ່ເກັ່ງກ້າ ເມື່ອເຈົ້າໂຊໂລໂມນສັງເກດເຫັນເຢໂຣໂບອາມເປັນຊາຍໜຸ່ມທີ່ເກັ່ງກ້າແລະ
ເອົາໃຈໃສ່ໃນວຽກການ ພະອົງຈຶ່ງແຕ່ງຕັ້ງໃຫ້ເປັນຜູ້ກຳກັບຄົນງານທັງໝົດຂອງຕະກູນມານາເຊ
ແລະເອຟຣາຢິມ. 29ມື້ໜຶ່ງ ເມື່ອເຢໂຣໂບອາມອອກໄປນະຄອນເຢຣູຊາເລັມ ຜູ້ປະກາດພຣະ-
ຄຳອາຣີຢາແຫ່ງເມືອງຊີໂລ ໄດ້ຍ່າງເຂົ້າໄປພົບລາວຢູ່ກາງທາງ ອາຣີຢາ ນຸ່ງເສື້ອຄຸມໃຫຍ່ທັງ
ສອງຢູ່ນອກເມືອງຕາມລຳພັງ. 30-31ອາຣີຢາແກ້ເສື້ອຄຸມອອກມາຈີກເປັນສິບສອງຕ່ອນ ແລະ
ເວົ້າຕໍ່ເຢໂຣໂບອາມວ່າ, “ສຳລັບເຈົ້າຈົ່ງເອົາໄປສິບຕ່ອນ ເພາະວ່າພຣະຜູ້ເປັນເຈົ້າຊຶ່ງເປັນ
ພຣະເຈົ້າຂອງອິສຣາເອນຊົງກ່າວຕໍ່ເຈົ້າວ່າ, “ເຮົາຈະແຍກລາຊະອານາຈັກອອກຈາກເມືອງ

ຂອງ ໂຊໂລໂມນ ແລະຈະຍົກໃຫ້ເຈົ້າສິບຕະກູນ. [32]ກະສັດ ໂຊໂລໂມນ ຈະໄດ້ຕະກູນໜຶ່ງໄວ້ເພື່ອ
ເຫັນແກ່ ດາວິດ ຜູ້ຮັບໃຊ້ຂອງເຮົາ ແລະເພື່ອເຫັນແກ່ນະຄອນ ເຢຣູຊາເລັມ ຊຶ່ງເປັນເມືອງທີ່ເຮົາ
ໄດ້ເລືອກອອກຈາກດິນແດນທັງໝົດຂອງ ອິສຣາເອນ. [33]ເພາະວ່າ ໂຊໂລໂມນ ໄດ້ລືມເຮົາ ແລະ
ໄປນະມັດສະການຮູບ ພະອັດຊະໂຕເຣດ ຄືເທບທິດາຂອງຊາວຊີໂດນ ພະເຄໂມດພະຂອງຊາວ
ໂມອາບ ພະໂມເລັກ ພະຂອງຊາວ ອຳໂມນ ລາວບໍ່ໄດ້ຟັງຄວາມເຮົາ ລາວເຮັດໃນສິ່ງທີ່ຜິດ
ແລະບໍ່ໄດ້ຖືຮັກສາພຣະບັນຍັດ ແລະຂໍ້ຄຳສັ່ງຂອງເຮົາ ຕາມທີ່ ດາວິດ ພໍ່ຂອງລາວໄດ້ປະຕິບັດ
ມາ. [34]ແຕ່ເຮົາຈະບໍ່ເອົາລາຊະອານາຈັກອອກໜີໝົດຈາກກຳມືຂອງລາວ ເພາະເຮົາຍັງຈະໃຫ້
ລາວເປັນເຈົ້າຊີວິດປົກຄອງໄປຕະຫລອດຊີວິດ ເພາະເຫັນແກ່ ດາວິດ ຜູ້ຮັບໃຊ້ຂອງເຮົາ ຜູ້ທີ່ຖື
ຮັກສາພຣະບັນຍັດ ແລະພຣະຄຳສັ່ງຂອງເຮົາໄວ້. [35]ເຮົາຈະຍຶດເອົາລາຊະອານາຈັກອອກຈາກ
ກຳມືລູກຊາຍຂອງລາວ ແລະມອບໃຫ້ເຈົ້າປົກຄອງສິບຕະກູນ. [36]ເຮົາຈະໃຫ້ລູກຊາຍຂອງລາວ
ປົກຄອງຕະກູນໜຶ່ງ ເພື່ອວ່າຈະມີເຊື້ອສາຍຂອງກະສັດ ດາວິດ ປົກຄອງຢູ່ຕະຫລອດໄປທີ່ນະ-
ຄອນ ເຢຣູຊາເລັມ ຊຶ່ງເປັນເມືອງທີ່ເຮົາໄດ້ເລືອກໄວ້ ໃຫ້ເປັນບ່ອນປະທັບຂອງເຮົາ. [37]ສະນັ້ນ
ເຮົາຈະໃຫ້ເຈົ້າປົກຄອງຕາມທີ່ເຈົ້າຕ້ອງການ ແລະເຈົ້າຈະເປັນເຈົ້າຊີວິດຂອງຊາວ ອິສຣາເອນ.
[38]ຖ້າວ່າເຈົ້າຟັງຄຳສັ່ງທຸກຢ່າງ ແລະຂັບຕາມວິຖີທາງຂອງເຮົາ ໂດຍປະຕິບັດໃນທຸກສິ່ງທີ່ຖືກ-
ຕ້ອງ ແລະຮັກສາພຣະບັນຍັດ ທັງຂໍ້ຄຳສັ່ງຂອງເຮົາ ຕາມທີ່ ດາວິດ ຜູ້ຮັບໃຊ້ຂອງເຮົາໄດ້ປະຕິ-
ບັດມາ ເຮົາຈະສະຖິດຢູ່ກັບເຈົ້າ ແລະຈະໃຫ້ເຈົ້າເປັນເຈົ້າຊີວິດແຫ່ງ ອິສຣາເອນ ແລະຈະໃຫ້ມີ
ເຊື້ອສາຍຂອງເຈົ້າປົກຄອງສືບແທນເຈົ້າ ຊຶ່ງເປັນເໝືອນດັ່ງກະສັດ ດາວິດ [39]ຍ້ອນ ໂຊໂລໂມນ
ເຮັດຜິດ ເຮົາຈະລົງໂທດເຊື້ອສາຍຂອງ ດາວິດ ແຕ່ຈະບໍ່ລົງໂທດເຊື້ອສາຍນັ້ນຕະຫລອດໄປ.”
[40]ໂຊໂລໂມນ ໄດ້ພະຍາຍາມຂ້າ ເຢໂຣໂບອາມ ແຕ່ລາວໄດ້ປົບໜີໄປຫາຊີຊາກ ເຈົ້າຊີວິດປະເທດ
ເອຢິບ ແລະກໍຄ້າງຢູ່ໃນປະເທດນີ້ຈົນ ໂຊໂລໂມນ ເຖິງສະຫວັນນະຄົດ.

### ໂຊໂລໂມນສິ້ນພະຊົນ

[41]ເລື່ອງລາວຂອງເຈົ້າ ໂຊໂລໂມນ ເຊັ່ນ ວຽກການຕ່າງໆ ທີ່ພະອົງໄດ້ຊົງກະທຳ ຕະຫລອດ
ທັງສະຕິປັນຍາຂອງພະອົງ ໄດ້ບັນທຶກໄວ້ໃນປຶ້ມປະຫວັດຂອງເຈົ້າ ໂຊໂລໂມນ. [42]ເຈົ້າ ໂຊໂລ-
ໂມນ ເປັນເຈົ້າຊີວິດທີ່ນະຄອນ ເຢຣູຊາເລັມ ປົກຄອງທົ່ວທັງ ອິສຣາເອນ ໄດ້ສີ່ສິບປີ. [43]ແລ້ວພະ
ອົງກໍສະຫວັນນະຄົດ ໄປຢູ່ນຳພວກປູ່ຍ່າຕາຍາຍ ພວກເຂົາໄດ້ຝັງສົບພະອົງໄວ້ໃນນະຄອນ ເຢ-
ຣູຊາເລັມ ຕໍ່ມາ ເຣໂຣໂບອາມ ລູກຊາຍຂອງພະອົງກໍຂຶ້ນຄອງລາຊະສົມບັດແທນ.

# ບົດທີ 12

## ປະຊາຊົນອິສຣາເອນກະບົດຕໍ່ຕ້ານ ເຣໂຣໂບອາມ

[1]ເຣໂຣໂບອາມ ໄດ້ໄປເມືອງ ເຊເຄັມ ບ່ອນທີ່ພວກອິສຣາເອນພາກັນເຕົ້າໂຮມເພື່ອແຕ່ງຕັ້ງໃຫ້
ເພິ່ນເປັນເຈົ້າຊີວິດ. [2]ຂ່າວເລື່ອງນີ້ໄດ້ຊ່າລືໄປຮອດຫູຂອງ ເຢໂຣໂບອາມ ລູກຊາຍຂອງ ເນບັດ
ຜູ້ທີ່ຍັງຢູ່ໃນປະເທດ ເອຢິບ ບ່ອນທີ່ລາວປົບໄປລີ້ເຈົ້າ ໂຊໂລໂມນ ດັ່ງນັ້ນ ລາວຈຶ່ງກັບຄືນເມືອ
ປະເທດຂອງຕົນເອງ. [3]ຊາວ ອິສຣາເອນ ໄດ້ໃຊ້ຄົນໄປເຊີນລາວມາ ແລ້ວ ເຢໂຣໂບອາມ ພ້ອມທັງ

ພວກອິສຣາເອນທຸກຄົນຈຶ່ງພາກັນໄປທູນຕໍ່ເຈົ້າ ເຣໂຣໂບອາມວ່າ, [4]"ເຈົ້າ ໂຊໂລໂມນສະເດັດພໍ່
ຂອງພະອົງ ປະຕິບັດຕໍ່ພວກຂ້ານ້ອຍຮຸນແຮງໂພດ ໂດຍໄດ້ສັ່ງໃຫ້ເຮັດວຽກອັນໜັກໜ່ວງ ດຽວ-
ນີ້ຂໍພະອົງຊົງຜ່ອນຜັນວຽກອັນໜັກໜ່ວງນີ້ ແລະໂຜດໃຫ້ຊີວິດຂອງພວກຂ້ານ້ອຍຢູ່ຢ່າງສະບາຍ
ພວກຂ້ານ້ອຍຈະຂໍເປັນຜູ້ຮັບໃຊ້ທີ່ສັດຊື່ຂອງພະອົງ." [5]ເຈົ້າ ເຣໂຣໂບອາມ ຈຶ່ງເວົ້າຕໍ່ພວກເຂົາ
ວ່າ, "ພາຍຫລັງສາມມື້ໃຫ້ກັບຄືນມາຫາເຮົາ ເຮົາຈະຕອບແທນພວກເຈົ້າ" ແລ້ວພວກປະຊາຊົນ
ກໍພາກັນກັບເມືອ.

[6]ແລ້ວເຈົ້າ ເຣໂຣໂບອາມ ຈຶ່ງປຶກສາກັບພວກອາວຸໂສທີ່ເຄີຍເປັນທີ່ປຶກສາຂອງກະສັດ ໂຊໂລ-
ໂມນ ເພິ່ນຖາມພວກນີ້ວ່າ, "ພວກທ່ານຈະແນະນຳໃຫ້ເຮົາຕອບປະຊາຊົນເຫລົ່ານີ້ຢ່າງໃດ?"
[7]ພວກນີ້ຈຶ່ງຕອບວ່າ, "ຖ້າພະອົງຢາກເຮັດວຽກຮ່ວມປະຊາຊົນເປັນຢ່າງດີ ຈົ່ງຕອບໃຫ້ຖືກໃຈ
ພວກເຂົາ ແລ້ວພວກເຂົາຈະຮັບໃຊ້ພະອົງດ້ວຍຄວາມສັດຊື່." [8]ແຕ່ວ່າ ເຈົ້າ ເຣໂຣໂບອາມປະຕິ-
ເສດຄຳແນະນຳຂອງພວກອາວຸໂສນີ້ ໂດຍໄປປຶກສາກັບພວກທີ່ລຸ້ນລາວຄາວດຽວກັນກັບຕົນ.
[9]ພະອົງຊົງຖາມວ່າ, "ພວກປະຊາຊົນໄດ້ມາຂໍຮ້ອງເຮົາໃຫ້ຜ່ອນຜັນວຽກອັນໜັກໜ່ວງຂອງພວກ
ເຂົາ ພວກທ່ານຈະເຫັນສົມຄວນໃຫ້ເຮົາເຮັດຢ່າງໃດດີ?" [10]ພວກເຂົາຈຶ່ງທູນຕອບວ່າ, "ພະອົງ
ຈະຕ້ອງບອກພວກເຂົາດັ່ງນີ້ຄື ນິ້ວກ້ອຍຂອງຂ້ອຍກໍໃຫຍ່ກວ່າແອວຂອງສະເດັດພໍ່. [11]ຖ້າວ່າ
ວຽກທີ່ພໍ່ຂອງຂ້ອຍມອບໝາຍໃຫ້ພວກເຈົ້າເຮັດນັ້ນໜັກໂພດ ວຽກຂອງຂ້ອຍທີ່ຈະມອບໃຫ້ນັ້ນກໍ
ຍັງຈະໜັກກວ່າ ເພິ່ນຂ້ຽນຕີພວກເຈົ້າດ້ວຍເຊືອກທຳມະດາ ແຕ່ຂ້ອຍຈະຂ້ຽນຕີພວກເຈົ້າດ້ວຍ
ເຊືອກໜັງ."

[12]ສາມມື້ຕໍ່ມາ ເຢໂຣໂບອາມ ພ້ອມທັງຊາວອິສຣາເອນທຸກຄົນກໍກັບຄືນມາຫາເຈົ້າ ເຣໂຣໂບ-
ອາມຕາມຄຳສັ່ງຂອງພະອົງ. [13-14]ເຈົ້າ ເຣໂຣໂບອາມປະຕິເສດຄຳແນະນຳຂອງທີ່ປຶກສາອາວຸ-
ໂສ ແຕ່ພະອົງໄດ້ເວົ້າຕໍ່ປະຊາຊົນຕາມຄຳແນະນຳຂອງພວກທີ່ປຶກສາໜຸ່ມ ພະອົງກ່າວດ້ວຍໃຈ
ຮ້າຍວ່າ, "ຖ້າວ່າວຽກການທີ່ພໍ່ຂອງຂ້ອຍສັ່ງໃຫ້ພວກເຈົ້າເຮັດນັ້ນໜັກໂພດ ວຽກຂອງຂ້ອຍທີ່ຈະ
ສັ່ງໃຫ້ເຮັດນັ້ນກໍແຮງຈະໜັກກວ່າ ເພິ່ນຂ້ຽນພວກເຈົ້າດ້ວຍເຊືອກທຳມະດາ ແຕ່ຂ້ອຍຈະຂ້ຽນ
ພວກເຈົ້າດ້ວຍເຊືອກໜັງ." [15]ການທີ່ເຈົ້າ ເຣໂຣໂບອາມປະຕິເສດບໍ່ຟັງປະຊາຊົນແມ່ນການກະ-
ທຳຂອງພຣະຜູ້ເປັນເຈົ້າ ເພື່ອເຮັດໃຫ້ຄຳສັນຍາຂອງພຣະອົງສຳເລັດລົງ ຊຶ່ງພຣະອົງຊົງມອບ
ໃຫ້ເຢໂຣໂບອາມ ຜ່ານທາງຜູ້ປະກາດພຣະຄຳອາຮີຢາ.

[16]ເມື່ອຊາວອິສຣາເອນເຫັນວ່າ ເຈົ້າຊີວິດບໍ່ຍອມຟັງສຽງຂອງພວກຕົນ ພວກເຂົາກໍຮ້ອງຂຶ້ນ
ດ້ວຍສຽງອັນດັງວ່າ, "ພວກຂ້ານ້ອຍມີສ່ວນກ່ຽວພັນແນວໃດກັບກະສັດດາວິດ ພວກເຂົາເຄີຍ
ເຮັດຫຍັງສຳລັບພວກເຮົາແດ່ ຊາວອິສຣາເອນເອີຍ! ຂໍໃຫ້ພວກເຮົາກັບຄືນເມືອບ້ານເກີດ ຂໍໃຫ້
ເຈົ້າ ເຣໂຣໂບອາມຮັບພາລະເບິ່ງແຍງພວກຂອງພະອົງເອງ." [17]ດັ່ງນັ້ນ ພວກອິສຣາເອນຈຶ່ງໄດ້
ພາກັນກະບົດ ໂດຍປ່ອຍໃຫ້ເຈົ້າ ເຣໂຣໂບອາມ ປົກຄອງປະຊາຊົນທີ່ຢູ່ຕາມເຂດແດນຂອງຕະ-
ກູນຢູດາ. [18]ເຈົ້າ ເຣໂຣໂບອາມໄດ້ແຕ່ງຕັ້ງໃຫ້ອາໂດຣາມ ຊຶ່ງເປັນຜູ້ຄວບຄຸມແຮງງານອອກໄປ
ຫາພວກອິສຣາເອນ ແຕ່ ພວກເຂົາໄດ້ແກວ່ງກ້ອນຫີນໃສ່ເພິ່ນຈົນຕາຍ ໃນຕອນນີ້ ເຈົ້າ ເຣໂຣ-
ໂບອາມກໍຟ້າວຂຶ້ນລົດມ້າໜີໄປນະຄອນເຢຣູຊາເລັມ. [19]ນັບຕັ້ງແຕ່ນັ້ນມາ ພວກອິສຣາເອນຢູ່

ທາງລາຊະອານາຈັກໄດ້ກະບົດຕໍ່ສູ້ເຊື້ອສາຍລາຊະວົງຂອງກະສັດ ດາວິດ. [20]ຄື ເມື່ອພວກ ອິ-
ສຣາເອນ ຮູ້ວ່າ ເຢໂຣໂບອາມ ກັບຄືນມາແຕ່ປະເທດ ເອຢິບ ແລ້ວ ພວກເຂົາກໍເຊີນເພິ່ນເຂົ້າມາ
ຮ່ວມກັບປະຊາຊົນ ແລະແຕ່ງຕັ້ງໃຫ້ເພິ່ນເປັນເຈົ້າຊີວິດຊາວ ອິສຣາເອນ ດັ່ງນັ້ນ ຈຶ່ງບໍ່ມີຜູ້ໃດ
ຕິດຕາມລາຊະວົງຂອງກະສັດ ດາວິດ ນອກຈາກຕະກູນ ຢູດາ ເທົ່ານັ້ນ.

[21]ເມື່ອເຈົ້າ ເຣໂຣໂບອາມ ມາຮອດນະຄອນ ເຢຣູຊາເລັມ ພະອົງກໍທ້ອນໂຮມນັກຮົບໃນຕະກູນ
ຢູດາ ແລະຕະກູນ ເບັນຢາມິນ ມີຈຳນວນທັງໝົດແສນແປດໝື່ນຄົນ ເພື່ອໄປຕໍ່ສູ້ກັບພວກ ອິ-
ສຣາເອນ ແລະຍາດເອົາລາຊະບັນລັງກັບຄືນມາ. [22-23]ແຕ່ພຣະຜູ້ເປັນເຈົ້າ ຊົງກ່າວຕໍ່ຜູ້ປະກາດ
ພຣະຄຳ ເຊມາຢາ ວ່າ “ຈົ່ງບອກ ເຣໂຣໂບອາມ ລູກຊາຍຂອງ ໂຊໂລໂມນ ເຈົ້າຊີວິດແຫ່ງ ຢູດາ
ພ້ອມທັງຊາວ ຢູດາ ແລະຊາວ ເບັນຢາມິນ ທັງໝົດວ່າ, [24]ພຣະຜູ້ເປັນເຈົ້າ ຊົງກ່າວດັ່ງນີ້ ຢ່າໄປສູ້
ກັບຊາວ ອິສຣາເອນ ພີ່ນ້ອງຂອງເຈົ້າເລີຍ ຈົ່ງໃຫ້ທຸກຄົນກັບບ້ານ ເພາະເຫດການທີ່ເກີດຂຶ້ນນີ້ມາ
ຈາກເຮົາ” ທຸກຄົນກໍເຊື່ອຟັງຄຳສັ່ງຂອງ ພຣະຜູ້ເປັນເຈົ້າ ແລະພາກັນກັບຄືນເມືອ.

## ເຢໂຣໂບອາມພາພວກອິສຣາເອນເຮັດຜິດ

[25]ຕໍ່ມາ ເຢໂຣໂບອາມ ໄດ້ສ້າງແປງເມືອງ ເຊເຄັມ ຢູ່ເຂດພູ ເອຟຣາຢິມ ແລະອາໄສຢູ່ພຽງຊົ່ວ-
ຄາວ ແລ້ວກໍຈາກບ່ອນນີ້ໄປສ້າງ ແປງເມືອງ ເປນູເອນ ອີກ. [26-27]ເຢໂຣໂບອາມ ຄິດໃນໃຈວ່າ,
“ຖ້າປະຊາຊົນຫາກຍັງໄປຖວາຍເຄື່ອງບູຊາທີ່ພຣະວິຫານຂອງ ພຣະຜູ້ເປັນເຈົ້າ ທີ່ນະຄອນ ເຢຣູ-
ຊາເລັມ ຢູ່ ຈິດໃຈຂອງປະຊາຊົນເຫລົ່ານີ້ ກໍຕ້ອງປ່ຽນເປັນພວກຂອງ ເຣໂຣໂບອາມ ເຈົ້າຊີວິດ
ແຫ່ງ ຢູດາ ແລ້ວພວກເຂົາກໍຈະຂ້າເຮົາ ຕໍ່ໄປ ລາຊະບັນລັງນີ້ກໍຈະກັບຄືນເປັນຂອງເຊື້ອສາຍ
ດາວິດ ອີກ. [28]ເມື່ອຄິດດັ່ງນັ້ນແລ້ວ ພະອົງຈຶ່ງເອົາຄຳມາສ້າງຮູບງົວເປັນສອງໂຕ ແລະເວົ້າຕໍ່
ປະຊາຊົນວ່າ, “ຊາວ ອິສຣາເອນ ເອີຍ ພວກເຈົ້າໄປຂາບໄຫວ້ທີ່ນະຄອນ ເຢຣູຊາເລັມ ດົນພໍສົມ-
ຄວນແລ້ວ ນີ້ເດ ພະຂອງພວກເຈົ້າ ທີ່ໄດ້ນຳພວກເຈົ້າອອກມາຈາກປະເທດ ເອຢິບ.” [29]ແລ້ວພະ
ອົງໄດ້ປະດິດສະຖານຮູບງົວ ໂຕໜຶ່ງໄວ້ທີ່ ເມືອງ ເບັດເອນ ແລະອີກໂຕໜຶ່ງໄວ້ທີ່ ເມືອງ ດານ.
[30]ດັ່ງນັ້ນ ຊາວ ອິສຣາເອນ ຈຶ່ງເຮັດຜິດໂດຍໄປຂາບໄຫວ້ຢູ່ເມືອງ ເບັດເອນ ແລະເມືອງ ດານ.

[31]ເຢໂຣໂບອາມ ຍັງໄດ້ສ້າງບ່ອນນະມັດສະການຢູ່ເທິງຈອມພູ ແລະໄດ້ແຕ່ງຕັ້ງປະໂລຫິດ
ຈາກຄອບຄົວທຳມະດາທີ່ບໍ່ແມ່ນຄົນ ເລວີ. [32]ເຢໂຣໂບອາມ ໄດ້ຈັດງານເທດສະການກິນລ້ຽງຂຶ້ນ
ໃນວັນທີສິບຫ້າຂອງເດືອນແປດ ເໝືອນດັ່ງເທດສະການທີ່ປະເທດ ຢູດາ ແລະໄດ້ຖວາຍເຄື່ອງ
ບູຊາເທິງ ແທ່ນບູຊາທີ່ ເມືອງ ເບັດເອນ ຄືໄດ້ຖວາຍບູຊາຮູບງົວທີ່ພະອົງໄດ້ຫລໍ່ຂຶ້ນນັ້ນ ແລ້ວ
ແຕ່ງຕັ້ງປະໂລຫິດທີ່ເມືອງ ເບັດເອນ ໃຫ້ປະຈຳຢູ່ບ່ອນນະມັດສະການທີ່ພະອົງໄດ້ສ້າງນັ້ນ.

[33]ໃນວັນທີສິບຫ້າຂອງ ເດືອນແປດຊຶ່ງເປັນວັນເວລາທີ່ພະອົງຊົງ ແຕ່ງຕັ້ງເອົາເອງ ພະອົງໄດ້
ຂຶ້ນໄປເທິງ ແທ່ນບູຊາ ແລະໄດ້ຈັດງານເທດສະການຂຶ້ນສຳລັບພວກ ອິສຣາເອນ ແລ້ວກໍຖວາຍ
ບູຊາເຄື່ອງຫອມ.

# ບົດທີ 13

## ຜູ້ປະກາດພຣະທຳແຫ່ງຢູດາເຕືອນເຢໂຣໂບອາມ

[1]ແລະ ເບິ່ງ ແມ ຄົນ ຂອງ ພຣະເຈົ້າ ຄົນ ໜຶ່ງ ໄດ້ ອອກ ມາ ຈາກ ແຂວງ ຢູດາ ໂດຍ ພຣະຄຳ ຂອງ
ພຣະຜູ້ເປັນເຈົ້າ ໄປ ຍັງ ເບັດເອນ, ເຢໂຣໂບອາມ ກຳລັງ ຢືນ ຢູ່ ໃກ້ ແທ່ນ ບູຊາ ເພື່ອ ຈະ ເຜົາ ເຄື່ອງ
ຫອມ [2]ຊາຍຄົນນັ້ນໄດ້ຮ້ອງຕໍ່ສູ້ແທ່ນບູຊານັ້ນ ໂດຍພຣະຄຳຂອງ ພຣະຜູ້ເປັນເຈົ້າ ວ່າ “ໂອ ແທ່ນ
ບູຊາ ແທ່ນບູຊາ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ‘ຈົ່ງເບິ່ງລູກຊາຍຄົນໜຶ່ງຈະເກີດມາໃນຄອບຄົວ
ຂອງ ດາວິດ ຊື່ ໂຢສີຢາ ແລະລາວ ຈະ ເອົາປະ ໂລຫິດ ແຫ່ງປູຊະນີຍະສະຖານສູງຜູ້ຊຶ່ງ ຈະ ເຜົາ
ເຄື່ອງຫອມມາຖວາຍເທິງເຈົ້າ ແລະລາວຈະເຜົາກະດູກຄົນເທິງເຈົ້າ’” [3]ແລະເພິ່ນກໍໃຫ້ໝາຍສຳ-
ຄັນໃນມື້ດຽວກັນນັ້ນ ກ່າວວ່າ “ນີ້ເປັນໝາຍສຳຄັນທີ່ ພຣະຜູ້ເປັນເຈົ້າ ໄດ້ກ່າວ ‘ເບິ່ງແມ ລາວຈະ
ມ້າງແທ່ນບູຊາລົງມາ ແລະຂີ້ເຖົ່າຊຶ່ງຢູ່ເທິງແທ່ນບູຊານັ້ນຈະປິວກະຈັດກະຈາຍໄປ.’”

## ພຣະເຈົ້າເຮັດໃຫ້ມືຂອງກະສັດເຢໂຣໂບອາມລີບໄປ

[4]ແລະ ຢູ່ ມາ ເມື່ອ ກະສັດ ເຢໂຣໂບອາມ ໄດ້ ຮັບ ຟັງ ຄຳ ບອກ ກ່າວ ຈາກ ຄົນ ຂອງ ພຣະເຈົ້າ ທີ່ ໄດ້
ຮ້ອງກ່າວ ໂທດ ແທ່ນບູຊານັ້ນທີ່ ເບັດເອນ, ພະອົງໄດ້ຖີກມືຂອງຕົນອອກຈາກແທ່ນບູຊາ ກ່າວວ່າ
“ຈົ່ງຈັບຄົນນັ້ນໄວ້” ແລະມືຂອງພະອົງທີ່ໄດ້ຢຽດອອກໃສ່ຄົນນັ້ນກໍລີບໄປ, ພະອົງຈະພັບແຂນ
ເຂົ້າຫາຕົວອີກກໍບໍ່ໄດ້ [5]ແທ່ນບູຊາກໍເພພັງລົງດ້ວຍ ແລະຂີ້ເຖົ່າກໍໄດ້ກະຈັດກະຈາຍໄປຈາກແທ່ນ
ຕາມໝາຍສຳຄັນຊຶ່ງຄົນຂອງ ພຣະເຈົ້າ ໄດ້ໃຫ້ໄວ້ໂດຍພຣະຄຳຂອງ ພຣະຜູ້ເປັນເຈົ້າ [6]ແລະ
ກະສັດ ກ່າວ ກັບ ຄົນ ຂອງ ພຣະເຈົ້າ ວ່າ “ຈົ່ງ ອ້ອນວອນ ຂໍ ພຣະກະລຸນາ ຈາກ ພຣະຜູ້ເປັນເຈົ້າ
ພຣະເຈົ້າ ຂອງທ່ານ ຂໍຈົ່ງອະທິຖານ ເພື່ອຂ້າພະເຈົ້າ ສຳລັບມືຂອງຂ້າພະເຈົ້າໃຫ້ກັບຄືນເຂົ້າຫາ
ຕົວໄດ້ອີກ” ແລະຄົນຂອງ ພຣະເຈົ້າ ກໍອ້ອນວອນຕໍ່ ພຣະຜູ້ເປັນເຈົ້າ ແລະມືຂອງກະສັດກໍໄດ້ພັບ
ກັບເຂົ້າຄືນຫາພະອົງໄດ້ອີກ ແລະເປັນຄືເກົ່າ [7]ແລະກະສັດກ່າວກັບຄົນຂອງ ພຣະເຈົ້າ ວ່າ “ເຊີນ
ມາ ເຮືອນກັບຂ້າພະເຈົ້າ ເຖີດ ແລະຮັບປະທານ ອາຫານ ນຳກັນ ຂ້າພະເຈົ້າ ຈະ ໃຫ້ລາງວັນ ແກ່
ທ່ານ” [8]ແລະຄົນຂອງ ພຣະເຈົ້າ ທູນກະສັດວ່າ “ຖ້າພະອົງຈະ ໃຫ້ເຄິ່ງລາຊະສົມບັດຂອງພະອົງ
ຂ້າພະເຈົ້າກໍຈະບໍ່ໄປກັບພະອົງ ແລະຂ້າພະເຈົ້າຈະບໍ່ຮັບປະທານ ເຂົ້າຈີ່ ຫລືດື່ມນ້ຳໃນບ່ອນນີ້
[9]ເພາະວ່າພຣະຄຳຂອງ ພຣະຜູ້ເປັນເຈົ້າ ໄດ້ສັ່ງ ແກ່ຂ້າພະເຈົ້າ ໄວ້ຢ່າງນີ້ວ່າ ‘ເຈົ້າຢ່າກິນ ເຂົ້າຈີ່
ຫລືດື່ມນ້ຳ ຫລືກັບໄປຕາມທາງທີ່ເຈົ້າມານັ້ນ’” [10]ດັ່ງນັ້ນ ເພິ່ນຈຶ່ງອອກໄປອີກທາງໜຶ່ງ ແລະບໍ່
ກັບໄປຕາມທາງທີ່ເພິ່ນມາຍັງ ເບັດເອນ.

[11]ມີຜູ້ທຳນວາຍ ເຖົ້າ ແກ່ຄົນໜຶ່ງທີ່ອາໄສຢູ່ໃນ ເບັດເອນ ແລະພວກລູກຊາຍຂອງ ເພິ່ນ ໄດ້ມາ
ບອກ ເພິ່ນ ເຖິງ ເລື່ອງ ລາວທັງໝົດຊຶ່ງຄົນຂອງ ພຣະເຈົ້າ ໄດ້ ເຮັດ ໃນ ເບັດເອນ ໃນມື້ນັ້ນ ແລະ
ຖ້ອຍ ຄຳ ຊຶ່ງ ເພິ່ນ ໄດ້ ກ່າວ ແກ່ ກະສັດ ພວກ ເຂົາ ກໍ ໄດ້ ບອກ ໃຫ້ ພໍ່ ຂອງ ພວກ ເຂົາ ຟັງ ເໝືອນ ກັນ
[12]ແລະພໍ່ຂອງພວກເຂົາໄດ້ຖາມພວກເຂົາວ່າ “ເພິ່ນໄປທາງໃດ?” ພວກລູກຊາຍທັງຫລາຍຂອງ
ເພິ່ນໄດ້ເຫັນທາງຊຶ່ງຄົນຂອງ ພຣະເຈົ້າ ຜູ້ມາຈາກ ຢູດາ ໄດ້ຍ່າງໄປນັ້ນ.

## ຜູ້ທຳນວາຍຂອງພຣະເຈົ້າບໍ່ເຊື່ອຟັງຈຶ່ງເສຍຊີວິດ

[13]ເພິ່ນໄດ້ເວົ້າກັບພວກລູກຊາຍຂອງເພິ່ນວ່າ “ຈົ່ງຜູກອານລາໃຫ້ພໍ່” ພວກເຂົາຈຶ່ງຜູກອານລາ

ໃຫ້ ແລ້ວເພິ່ນກໍຂຶ້ນຂີ່ລາໄປ [14]ແລະໄດ້ຕິດຕາມຄົນຂອງພຣະເຈົ້າ ແລະໄດ້ພົບເພິ່ນນັ່ງຢູ່ກ້ອງ
ຕົ້ນໂອກ[ກ] ຕົ້ນໜຶ່ງ ແລະໄດ້ຖາມເພິ່ນວ່າ "ທ່ານເປັນຄົນຂອງພຣະເຈົ້າທີ່ໄດ້ມາຈາກແຂວງຢູ-
ດາບໍ?" ເພິ່ນກໍຕອບວ່າ "ແມ່ນແລ້ວ" [15]ແລະເພິ່ນໄດ້ບອກຄົນຂອງພຣະເຈົ້າວ່າ "ເຊີນມາໃນ
ເຮືອນກັບຂ້າພະເຈົ້າເຖີດ ແລະມາຮັບປະທານອາຫານນຳກັນ" [16]ເພິ່ນເວົ້າວ່າ "ຂ້າພະເຈົ້າຈະ
ກັບໄປກັບທ່ານ ຫລືເຂົ້າໄປພັກກັບທ່ານກໍບໍ່ໄດ້ ຂ້າພະເຈົ້າຈະບໍ່ຮັບປະທານ ອາຫານ ຫລືດື່ມ-
ນ້ຳກັບທ່ານໃນບ່ອນນີ້ [17]ເພາະພຣະຄຳຂອງພຣະຜູ້ເປັນເຈົ້າກ່າວກັບຂ້າພະເຈົ້າວ່າ 'ເຈົ້າຢ່າຮັບ
ປະທານອາຫານ ຫລືດື່ມນ້ຳໃນບ່ອນນັ້ນ ຫລືກັບຄືນໂດຍທາງທີ່ເຈົ້າໄດ້ມາ'" [18]ແລະເພິ່ນຈຶ່ງເວົ້າ
ກັບຄົນຂອງພຣະເຈົ້າວ່າ "ຂ້າພະເຈົ້າກໍເປັນຜູ້ທຳນວາຍຢ່າງທີ່ທ່ານເປັນນັ້ນ ມີທູດສະຫວັນອົງ
ໜຶ່ງມາບອກ ຂ້າພະເຈົ້າໂດຍພຣະຄຳຂອງພຣະຜູ້ເປັນເຈົ້າວ່າ 'ຈົ່ງໃຫ້ລາວກັບມານຳເຈົ້າໃນ
ເຮືອນຂອງເຈົ້າ ເພື່ອລາວຈະໄດ້ຮັບປະທານອາຫານ ແລະດື່ມນ້ຳ'" ແຕ່ເພິ່ນໄດ້ເວົ້າຂີ້ຕົວະຕໍ່ຄົນ
ຂອງພຣະເຈົ້າ [19]ດັ່ງນັ້ນ ລາວຈຶ່ງໄປກັບເພິ່ນ ແລະໄດ້ຮັບປະທານອາຫານໃນເຮືອນຂອງຜູ້ທຳ-
ນວາຍເຖົ້າຄົນນັ້ນ ແລະໄດ້ດື່ມນ້ຳ.

[20]ແລະຕໍ່ມາຂະນະທີ່ພວກເພິ່ນກຳລັງນັ່ງຢູ່ທີ່ໂຕະ ພຣະຄຳຂອງພຣະຜູ້ເປັນເຈົ້າໄດ້ມາເຖິງຜູ້
ທຳນວາຍທີ່ໄດ້ນຳ ເພິ່ນກັບມາອີກ [21]ແລະຜູ້ນັ້ນໄດ້ຮ້ອງຕໍ່ຄົນຂອງພຣະເຈົ້າຜູ້ມາຈາກຢູດາວ່າ
"ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ວ່າ 'ເພາະເຈົ້າບໍ່ເຊື່ອຟັງ ພຣະຄຳຂອງພຣະຜູ້ເປັນເຈົ້າ ແລະບໍ່
ໄດ້ຮັກສາພຣະບັນຍັດຊຶ່ງພຣະຜູ້ເປັນເຈົ້າພຣະເຈົ້າຂອງເຈົ້າໄດ້ສັ່ງແກ່ເຈົ້າ [22]ແຕ່ເຈົ້າໄດ້ກັບມາ
ແລະຮັບປະທານອາຫານ ແລະດື່ມນ້ຳໃນບ່ອນທີ່ພຣະຜູ້ເປັນເຈົ້າກ່າວກັບເຈົ້າວ່າ "ຢ່າຮັບປະ-
ທານອາຫານ ຫລືດື່ມນ້ຳ" ເພາະສະນັ້ນຊາກສົບຂອງເຈົ້າຈະບໍ່ໄດ້ເຂົ້າໄປເຖິງອຸບໂມງຂອງບັນ-
ພະບູລຸດຂອງເຈົ້າ.'"

[23]ແລະຫລັງຈາກທີ່ເພິ່ນໄດ້ຮັບປະທານອາຫານ ແລະດື່ມນ້ຳແລ້ວ ຕໍ່ມາເພິ່ນໄດ້ຜູກອານລາ
ໃຫ້ຜູ້ທຳນວາຍ ຜູ້ທີ່ເພິ່ນໄດ້ພາກັບມານັ້ນ [24]ແລະໃນເວລາທີ່ເພິ່ນໄດ້ກັບເມືອ ສິງໃຫຍ່ກໍອອກມາ
ພົບເພິ່ນໃນຖະໜົນ ແລະຂ້າເພິ່ນ ແລະຊາກສົບຂອງເພິ່ນ ກໍຖືກຖິ້ມໄວ້ໃນຖະໜົນ ແລະລາໂຕ
ນັ້ນກໍຢືນຢູ່ຂ້າງໆໃກ້ສົບນັ້ນ, ສິງໃຫຍ່ກໍຢືນຢູ່ໃກ້ຊາກສົບຄືກັນ [25]ແລະເບິ່ງແມ ມີຄົນຜ່ານໄປ
ແລະໄດ້ເຫັນຊາກສົບຖິ້ມຢູ່ກາງທາງ ແລະສິງໃຫຍ່ກໍຢືນຢູ່ໃກ້ຊາກສົບນັ້ນ ພວກເຂົາກໍມາບອກ
ກັນຢູ່ໃນເມືອງບ່ອນທີ່ຜູ້ທຳນວາຍເຖົ້າຢູ່ນັ້ນ [26]ແລະເມື່ອຜູ້ທຳນວາຍຜູ້ທີ່ນຳເພິ່ນກັບມາ ເມືອໄດ້
ຍິນເລື່ອງນັ້ນ ເພິ່ນກໍເວົ້າວ່າ "ນັ້ນເປັນຄົນຂອງພຣະເຈົ້າ ຜູ້ບໍ່ເຊື່ອຟັງພຣະຄຳຂອງພຣະຜູ້ເປັນ-
ເຈົ້າ ເພາະສະນັ້ນພຣະຜູ້ເປັນເຈົ້າໄດ້ມອບລາວໄວ້ກັບສິງໃຫຍ່ ຊຶ່ງໄດ້ຈີກລາວ ແລະຂ້າລາວ
ຕາມພຣະຄຳທີ່ພຣະຜູ້ເປັນເຈົ້າກ່າວກັບລາວໄວ້ແລ້ວ" [27]ແລະເພິ່ນໄດ້ເວົ້າກັບພວກລູກຊາຍວ່າ
"ຈົ່ງຜູກອານລາໃຫ້ພໍ່" ແລ້ວພວກເຂົາກໍຜູກອານລາໃຫ້ [28]ແລະເພິ່ນໄດ້ໄປ ແລະພົບຊາກສົບນັ້ນ
ຖິ້ມຢູ່ກາງທາງກັບສິງໃຫຍ່ກໍຢືນຢູ່ໃກ້ຊາກສົບນັ້ນ ສິງໃຫຍ່ບໍ່ໄດ້ກິນ ຊາກສົບນັ້ນ ຫລືກັດຈີກ
ໂຕລາ [29]ແລະຜູ້ທຳນວາຍກໍຍົກຊາກສົບຄົນຂອງພຣະເຈົ້າ ແລະວາງໄວ້ເທິງຫລັງລາ ນຳຊາກ
ສົບກັບມາຍັງເມືອງຂອງຜູ້ທຳນວາຍ ເພື່ອໄວ້ທຸກໃຫ້ ແລະຝັງສົບຂອງລາວ [30]ແລະເພິ່ນໄດ້ວາງ

[ກ]ໄມ້ສົນ

ສົບນັ້ນໃນອຸບໂມງຝັງສົບຂອງເພິ່ນເອງ ແລະພວກເຂົາກໍໄວ້ທຸກໃຫ້ ແລະກ່າວວ່າ “ອະນິດຈາ
ພີ່ນ້ອງເອີຍ” [31]ຕໍ່ມາເມື່ອໄດ້ຝັງສົບຄົນຂອງ ພຣະເຈົ້າ ໄວ້ແລ້ວ ເພິ່ນຈຶ່ງເວົ້າກັບພວກລູກຊາຍ
ຂອງຕົນວ່າ “ເມື່ອຂ້ອຍຕາຍຈົ່ງຝັງສົບຂ້ອຍໄວ້ໃນອຸບໂມງຝັງສົບຊຶ່ງຝັງຄົນຂອງ ພຣະເຈົ້າ ໄວ້
ນັ້ນ ຈົ່ງວາງກະດູກຂອງຂ້ອຍໄວ້ກັບຂ້າງກະດູກຂອງເພິ່ນ [32]ເພາະວ່າຄຳເວົ້າທີ່ເພິ່ນໄດ້ຮ້ອງ
ອອກໂດຍພຣະຄຳຂອງ ພຣະຜູ້ເປັນເຈົ້າ ຊຶ່ງກ່າວໂທດແທ່ນບູຊາໃນ ເບັດເອນ ແລະຕໍ່ສູ້ບັນດາ
ວິຫານແຫ່ງປູຊະນິຍະສະຖານສູງທີ່ຢູ່ໃນຫົວເມືອງຊາມາເຣຍຈະສຳເລັດຢ່າງແນ່ນອນ.”

## ເຢໂຣໂບອາມໄດ້ຮັບຄຳຕັກເຕືອນແລ້ວ ແຕ່ບໍ່ກັບຈາກຄວາມບາບຂອງຕົນ

[33]ຫລັງຈາກສິ່ງເຫລົ່ານີ້ ເຢໂຣໂບອາມບໍ່ໄດ້ຖອຍຫລັງກັບຈາກທາງຊົ່ວຂອງຕົນ ໃນທ່າມກາງ
ປະຊາຊົນ ໄດ້ສະຖາປະນາບາງຄົນໃຫ້ເປັນປະໂລຫິດປະຈຳປູຊະນິຍະສະຖານສູງອີກ ຜູ້ໃດທີ່
ພໍໃຈເປັນ ພະອົງກໍແຕ່ງຕັ້ງພວກເຂົາໃຫ້ເປັນປະໂລຫິດປະຈຳບັນດາປູຊະນິຍະສະຖານສູງ
[34]ແລະສິ່ງນີ້ກາຍເປັນຄວາມບາບແກ່ຄອບຄົວ ເຢໂຣໂບອາມ ເພື່ອຈະຕັດ ແລະທຳລາຍເຊື້ອ-
ສາຍຂອງພວກເຂົາອອກຈາກແຜ່ນດິນໂລກ.

# ບົດທີ 14

## ພຣະເຈົ້າສາບແຊ່ງເຊື້ອສາຍຂອງເຢໂຣໂບອາມ

[1]ໃນຄາວນັ້ນ ອາບີຢາ ລູກຊາຍຂອງ ເຢໂຣໂບອາມ ກໍເຈັບປ່ວຍຢູ່ [2]ແລະ ເຢໂຣໂບອາມ ໄດ້ສັ່ງ
ກັບມະເຫສີຂອງຕົນວ່າ “ຈົ່ງລຸກຂຶ້ນປອມຕົວຂອງເຈົ້າ ແລະຢ່າໃຫ້ໃຜຮູ້ວ່າເຈົ້າເປັນ ມະເຫສີ
ຂອງ ເຢໂຣໂບອາມ ແລະຈົ່ງໄປຍັງເມືອງຊີໂລ ອາຮີຢາຜູ້ທຳນວາຍຢູ່ບ່ອນນັ້ນ ຜູ້ໄດ້ກ່າວເລື່ອງ
ຂ້ອຍວ່າ ຂ້ອຍຈະໄດ້ເປັນກະສັດເໜືອຊົນຊາດນີ້ [3]ນາງຈົ່ງເອົາເຂົ້າຈີ່ສິບກ້ອນ ແລະຂະໜົມ
ຫວານໄປນຳແລະນ້ຳເຜິ້ງໜຶ່ງໄຫ ໄປຫາເພິ່ນ ເພິ່ນຈະບອກນາງວ່າ ແມ່ນຫຍັງຈະເກີດຂຶ້ນກັບ
ເດັກນັ້ນ.”

[4]ມະເຫສີຂອງ ເຢໂຣໂບອາມ ກໍເຮັດດັ່ງນັ້ນ ນາງໄດ້ລຸກຂຶ້ນໄປເມືອງຊີໂລ ຈົນມາຮອດເຮືອນ
ຂອງ ອາຮີຢາ ຝ່າຍ ອາຮີຢາ ຕາຂອງເພິ່ນເບິ່ງບໍ່ເຫັນ ເພາະວ່າເພິ່ນມີອາຍຸສູງຫລາຍແລ້ວ
[5]ພຣະຜູ້ເປັນເຈົ້າກ່າວກັບ ອາຮີຢາວ່າ “ເບິ່ງແມ ມະເຫສີຂອງ ເຢໂຣໂບອາມກຳລັງມາ ເພື່ອຈະ
ຖາມເຈົ້າເຖິງເລື່ອງ ລູກຊາຍຂອງລາວ ເພາະເດັກນັ້ນປ່ວຍຢູ່ ເຈົ້າຈົ່ງບອກນາງດັ່ງນີ້ ແລະດັ່ງ-
ນັ້ນ ເມື່ອນາງສະເດັດໄປຮອດນາງກໍທຳທ່າເຮັດເປັນຄົນອື່ນ” [6]ແຕ່ເມື່ອ ອາຮີຢາ ໄດ້ຍິນສຽງ
ບາດຕີນຂອງນາງ ເມື່ອນາງສະເດັດມາຮອດປະຕູ ເພິ່ນຈຶ່ງເວົ້າວ່າ “ຂໍເຊີນມະເຫສີ ຂອງ ເຢໂຣ-
ໂບອາມ ສະເດັດເຂົ້າມາຂ້າງໃນເທີ້ນ ເຫດໃດທ່ານຈຶ່ງປອມຕົວເຮັດເປັນຄົນອື່ນເພາະຂ້ານ້ອຍໄດ້
ຮັບພຣະບັນຊາໃຫ້ທູນຂ່າວອັນໜ້າສະຫລົດໃຈແກ່ນາງ [7]ຂໍສະເດັດກັບໄປທູນ ເຢໂຣໂບອາມ ວ່າ
‘ພຣະຜູ້ເປັນເຈົ້າ ພຣະເຈົ້າ ແຫ່ງ ອິສຣາເອນ ກ່າວດັ່ງນີ້ວ່າ ເພາະເຮົາໄດ້ເຊີດຊູເຈົ້າຂຶ້ນຈາກປະ-
ຊາຊົນ ແລະໄດ້ເຮັດໃຫ້ເຈົ້າເປັນກະສັດປົກຄອງ ອິສຣາເອນ ປະຊາຊົນຂອງເຮົາ [8]ແລະໄດ້ຍາດ
ເອົາລາຊະອານາຈັກຈາກລູກຫຼານຂອງ ດາວິດ ມາໃຫ້ແກ່ເຈົ້າ ແລະເຖິງປານນັ້ນ ເຈົ້າກໍບໍ່ເປັນ
ເໝືອນ ດາວິດ ຜູ້ຮັບໃຊ້ຂອງເຮົາ ຜູ້ໄດ້ຮັກສາບັນຍັດທັງຫລາຍຂອງເຮົາ ແລະຕິດຕາມເຮົາດ້ວຍ

ສຸດຈິດສຸດໃຈຂອງລາວ ລາວເຮັດໃນສິ່ງທີ່ຖືກຕ້ອງຕໍ່ຕາຂອງເຮົາ [9]ແຕ່ວ່າເຈົ້າໄດ້ເຮັດຊົ່ວຫລາຍ
ກວ່າຄົນທັງປວງທີ່ຢູ່ກ່ອນເຈົ້າ ແລະໄດ້ໄປສ້າງພະອື່ນ ແລະຫລໍ່ຮູບ ແລະໄດ້ເຮັດ ໃຫ້ເຮົາຄຽດ
ຮ້າຍ ແລະໄດ້ຖິ້ມເຮົາໄວ້ຢູ່ເບື້ອງຫລັງຂອງເຈົ້າ [10]ເພາະສະນັ້ນ ເບິ່ງແມ ເຮົາຈະນຳເຫດຮ້າຍ
ມາເຖິງຄອບຄົວຂອງ ເຢໂຣໂບອາມ ແລະຈະຕັດຜູ້ຊາຍທຸກຄົນ ອອກຈາກ ເຢໂຣໂບອາມ ທັງ
ຂ້າທາດ ແລະເສລີຊົນໃນ ອິສຣາເອນ ແລະຈະຜານຄົນທີ່ເຫລືອໃນຄອບຄົວ ເຢໂຣໂບອາມ ໃຫ້
ໝົດຢ່າງສິ້ນເຊີງ ເໝືອນກັບຄົນທີ່ເຜົາອາຈົມສັດໃຫ້ໄໝ້ຈົນບໍ່ເຫລືອຫຍັງໝົດ [11]ຜູ້ໃດໃນຄອບຄົວ
ເຢໂຣໂບອາມ ທີ່ຕາຍໃນເມືອງ ໝາຈະມາກັດກິນ ແລະຜູ້ໃດທີ່ຕາຍໃນທົ່ງນານົກໃນອາກາດຈະ
ມາຈິກກິນ ເພາະ ພຣະຜູ້ເປັນເຈົ້າ ໄດ້ກ່າວໄວ້ແລ້ວ.'

[12]ເພາະສະນັ້ນ ຂໍເຊີນສະເດັດກັບໄປຍັງຕຳໜັກຂອງພະນາງ ເມື່ອຕີນຂອງພະນາງກ້າວເຂົ້າ
ໄປໃນເມືອງ ເດັກ ນ້ອຍນັ້ນກໍຈະຕາຍ [13]ແລະພວກ ອິສຣາເອນ ທັງປວງຈະໄດ້ໄວ້ທຸກໃຫ້ລາວ
ແລະຈະຝັງສົບລາວໄວ້ ເພາະລາວຜູ້ດຽວເທົ່ານັ້ນໃນ ຄອບຄົວ ເຢໂຣໂບອາມ ທີ່ຈະໄປເຖິງຂຸມຝັງ
ສົບ ເພາະໃນຕົວລາວນັ້ນຍັງເຫັນບາງສິ່ງທີ່ພໍພຣະໄທ ພຣະຜູ້ເປັນເຈົ້າ ພຣະເຈົ້າ ແຫ່ງ ອິສຣາເອນ
ໃນຄອບຄົວຂອງ ເຢໂຣໂບອາມ [14]ຫລາຍກວ່ານັ້ນອີກ ພຣະຜູ້ເປັນເຈົ້າ ຈະຕັ້ງກະສັດອີກອົງໜຶ່ງ
ປົກຄອງ ອິສຣາເອນ ເພື່ອພະອົງຈະຕັດຄອບຄົວ ຂອງ ເຢໂຣໂບອາມ ອອກໃນມື້ນີ້ [15]ແລະແຕ່ນີ້
ຕໍ່ໄປ ພຣະຜູ້ເປັນເຈົ້າ ຈະຕີ ອິສຣາເອນ ດັ່ງໄມ້ອໍ້ສັ່ນຢູ່ໃນນໍ້າ ແລະຈະຖອນຮາກ ອິສຣາເອນ
ອອກຈາກ ແຜ່ນດິນອັນດີນີ້ຊຶ່ງພຣະອົງໄດ້ຍົກໃຫ້ແກ່ບັນພະບູລຸດຂອງພວກເຂົາ ແລະພຣະອົງ
ຈະໃຫ້ພວກເຂົາພັດພາກຈາກກັນໄປຟາກແມ່ນໍ້າເບື້ອງນັ້ນ ເພາະພວກເຂົາໄດ້ສ້າງເສົາຮູບເຄົາ-
ລົບຂອງພວກເຂົາ ຊຶ່ງເປັນເຫດໃຫ້ ພຣະຜູ້ເປັນເຈົ້າ ພຣະພິໂລດ [16]ແລະພຣະອົງຈະມອບພວກ
ອິສຣາເອນ ໄວ້ເພາະບາບທັງຫລາຍຂອງ ເຢໂຣໂບອາມ ທີ່ລາວໄດ້ເຮັດ ແລະນຳພາ ອິສຣາເອນ
ໃຫ້ເຮັດບາບດ້ວຍ."

[17]ແລ້ວມະເຫສີຂອງ ເຢໂຣໂບອາມ ຈຶ່ງລຸກຂຶ້ນ ແລ້ວອອກໄປ ແລະມາຮອດເມືອງ ຕີຣະຊາ
ເມື່ອນາງຍ່າງເຂົ້າໄປໃນເຮືອນເດັກນ້ອຍນັ້ນກໍຕາຍ [18]ແລະພວກ ອິສຣາເອນ ທັງປວງໄດ້ຝັງສົບ
ເພິ່ນ ແລະຮ້ອງໄຫ້ໂສກເສົ້າຍ້ອນເພິ່ນຕາມພຣະຄຳຂອງ ພຣະຜູ້ເປັນເຈົ້າ ຊຶ່ງພຣະອົງກ່າວໂດຍ
ອາຮີຢາຜູ້ທຳນວາຍ ຜູ້ຮັບໃຊ້ຂອງພຣະອົງ.

## ເຢໂຣໂບອາມເສຍຊີວິດ[ກ]

[19]ກິດຈະການຕ່າງໆຂອງ ເຢໂຣໂບອາມ ກ່ຽວກັບເພິ່ນໄດ້ສູ້ຮົບ ແລະໄດ້ປົກຄອງຢ່າງໃດນັ້ນ
ກໍໄດ້ບັນທຶກໄວ້ໃນໜັງສືຂ່າວຄາວແຫ່ງບັນດາກະສັດ ອິສຣາເອນ [20]ເວລາທີ່ ເຢໂຣໂບອາມ ປົກ-
ຄອງນັ້ນເປັນເວລາຊາວສອງປີ ແລະເພິ່ນກໍລ່ວງລັບໄປຢູ່ກັບບັນພະບຸລຸດຂອງຕົນ ແລະ ນາດາບ
ລູກຊາຍຂອງເພິ່ນກໍຂຶ້ນປົກຄອງແທນ.

## ເຣໂຣໂບອາມນຳພາຄົນຢູດາໃຫ້ເຮັດບາບ[ຂ]

[21]ຝ່າຍ ເຣໂຣໂບອາມ ລູກຊາຍຂອງ ໂຊໂລໂມນ ໄດ້ປົກຄອງຢູ່ໃນ ຢູດາ ເມື່ອ ເຣໂຣໂບອາມ ຂຶ້ນ

[ກ]2ຂຄວ 13:20

[ຂ]2ຂຄວ 12:1 [ຂ]2ຂຄວ 12:2–12 [ຄ]2ຂຄວ 12:13–16 [ງ]2ຂຄວ 13:12

ປົກຄອງນັ້ນລາວມີອາຍຸໄດ້ສີ່ສິບເອັດປີ ແລະໄດ້ປົກຄອງໃນ ເຢຣູຊາເລັມ ສິບເຈັດປີ ຊຶ່ງເປັນ
ເມືອງທີ່ ພຣະຜູ້ເປັນເຈົ້າ ໄດ້ເລືອກຈາກບັນດາຕະກູນ ອິສຣາເອນ ເພື່ອຈະໃຫ້ພຣະນາມຂອງ
ພຣະອົງສະຖິດຢູ່ບ່ອນນັ້ນ ແມ່ຂອງກະສັດມີຊື່ວ່ານາງ ນາອາມາ ຄົນອຳໂມນ.
22ແລະພວກ ຢູດາ ໄດ້ເຮັດຊົ່ວຕໍ່ສາຍພຣະເນດຂອງ ພຣະຜູ້ເປັນເຈົ້າ ແລະພວກເຂົາໄດ້ເຮັດ
ໃຫ້ພຣະອົງ ໂກດຮ້າຍ ເພາະບາບທັງຫລາຍຊຶ່ງພວກເຂົາໄດ້ເຮັດນັ້ນຫລາຍກວ່າບັນພະບູລຸດ
(ປູ່ຍ່າຕານາຍ) ຂອງພວກເຂົາທີ່ໄດ້ເຮັດຜ່ານມາ 23ເພາະພວກເຂົາໄດ້ສ້າງປູຊະນີຍະສະຖານ
ສູງສຳລັບພວກເຂົາເອງ ແລະເສົາສັກສິດ ແລະເສົາຮູບເຄົາລົບສຳລັບຕົວພວກເຂົາໄວ້ເທິງໂນນ
ພູສູງໆທຸກເນີນແລະກ້ອງຕົ້ນໄມ້ຂຽວທຸກຕົ້ນ 24ແລະມີຊາຍໂສເພນີໃນແຜ່ນດິນນັ້ນດ້ວຍ ແລະ
ພວກເຂົາໄດ້ເຮັດຕາມບັນດາສິ່ງໜ້າກຽດຊັງຂອງພວກຕ່າງຊາດທັງຫລາຍ ຊຶ່ງ ພຣະຜູ້ເປັນເຈົ້າ
ໄດ້ຂັບໄລ່ອອກໄປຕໍ່ໜ້າລູກຫລານ ອິສຣາເອນ ແລ້ວ.

## ຊິຊາກບຸກລຸກເມືອງເຢຣູຊາເລັມ[ຂ]

25ຕໍ່ມາໃນປີທີຫ້າແຫ່ງກະສັດ ເຣໂຮໂບອາມ ຊີຊາກ ກະສັດ ເອຢິບ ໄດ້ຂຶ້ນມາຕໍ່ສູ້ເມືອງ ເຢຣູ-
ຊາເລັມ 26ພະອົງໄດ້ປຸ້ນຊັບສົມບັດໃນພຣະວິຫານຂອງ ພຣະຜູ້ເປັນເຈົ້າ ແລະຊັບສົມບັດໃນພະ-
ລາຊະວັງຂອງກະສັດ ພະອົງໄດ້ເກັບເອົາໄປທຸກຢ່າງ ແລະໄດ້ເກັບໂລ່ຄຳຊຶ່ງ ໂຊໂລໂມນ ໄດ້ສ້າງ
ນັ້ນໄປໝົດຄືກັນ 27ແລະກະສັດ ເຣໂຮໂບອາມ ໄດ້ເຮັດໂລ່ທອງເຫລືອງໄວ້ແທນ ແລະມອບໄວ້
ໃນມືຂອງພວກທະຫານຮັກສາພະອົງ ຜູ້ເຝົ້າຍາມພະລາຊະວັງ 28ເມື່ອກະສັດສະເດັດເຂົ້າໄປຍັງ
ພຣະວິຫານຂອງ ພຣະຜູ້ເປັນເຈົ້າ ທະຫານທີ່ຮັກສາພະອົງກໍຖືໂລ່ອອກແລ້ວກໍນຳກັບໄປເກັບໄວ້
ໃນຫ້ອງທະຫານຮັກສາພະອົງຕາມເດີມ.
29ກິດຈະການຕ່າງໆຂອງຂອງ ເຣໂຮໂບອາມ ແລະສັບພະສິ່ງທີ່ພະອົງໄດ້ເຮັດ ໄດ້ບັນທຶກໄວ້
ໃນໜັງສືຂ່າວຄາວແຫ່ງກະສັດຂອງ ຢູດາ ບໍ່ແມ່ນບໍ 30ແລະ ເຣໂຮໂບອາມ ກັບ ເຢໂຣໂບອາມ ໄດ້
ເຮັດສົງຄາມຕໍ່ສູ້ກັນຈົນເສຍຊີວິດ.

## ເຣໂຮໂບອາມເສຍຊີວິດ[ຄ]

31ແລະ ເຣໂຮໂບອາມ ກໍລ່ວງລັບໄປຢູ່ກັບບັນພະບູລຸດຂອງຕົນ ແລະພວກເຂົາກໍຝັງສົບໄວ້ກັບ
ບັນພະບູລຸດຂອງພະອົງ ໃນ ເມືອງ ດາວິດ ແມ່ຂອງພະອົງ ມີຊື່ວ່ານາງ ນາອາມາ ຄົນ ອຳໂມນ
ແລະ ອາບີຢາ ລູກຊາຍກໍຂຶ້ນປົກຄອງແທນພະອົງ.

# ບົດທີ 15

## ອາບີຢາໄດ້ຂຶ້ນປົກຄອງຢູດາ[ງ]

1ໃນປີທີສິບແປດແຫ່ງລາຊະການກະສັດ ເຢໂຣໂບອາມ ລູກຊາຍ ເນບັດ ອາບີຢາ ໄດ້ຂຶ້ນປົກ-
ຄອງ ຢູດາ 2ພະອົງໄດ້ປົກຄອງໃນ ເຢຣູຊາເລັມ ໃນລະຫວ່າງສາມປີ ແມ່ຂອງພະອົງຊື່ວ່ານາງ
ມາອາກາ ລູກສາວຂອງ ອາບີຊາໂລມ 3ພະອົງດຳເນີນຕາມການບາບທຸກຢ່າງຊຶ່ງພໍ່ຂອງພະອົງ
ໄດ້ເຮັດມາກ່ອນ ແລະໃຈຂອງພະອົງກໍບໍ່ບໍລິສຸດຕໍ່ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງພະອົງ ເໝືອນ
ດັ່ງໃຈຂອງ ດາວິດ ບັນພະບູລຸດຂອງພະອົງ 4ຢ່າງໃດກໍດີ ເພື່ອເຫັນແກ່ ດາວິດ ພຣະຜູ້ເປັນເຈົ້າ

ພຣະເຈົ້າ ຂອງພະອົງຈະປະທານໂຄມໄຟໃຫ້ໃນ ເຢຣູຊາເລັມ ໂດຍຕັ້ງລູກຊາຍໄວ້ພາຍຫລັງພະ
ອົງ ແລະເພື່ອໃຫ້ ເຢຣູຊາເລັມ ຕັ້ງໝັ້ນຄົງຢູ່ [5]ເພາະວ່າ ດາວິດ ໄດ້ເຮັດໃນສິ່ງທີ່ຖືກຕ້ອງໃນສາຍ
ພຣະເນດຂອງ ພຣະຜູ້ເປັນເຈົ້າ ແລະບໍ່ໄດ້ຫັນໜີໄປ ຈາກຄຳສັ່ງຊຶ່ງ ພຣະຜູ້ເປັນເຈົ້າ ໄດ້ສັ່ງໄວ້
ຕະຫລອດຊີວິດຂອງພະອົງ ນອກຈາກເລື່ອງ ອູຣີຢາ ຄົນ ຮິດຕີ [6]ເຣໂຣໂບອາມ ກັບ ເຢໂຣໂບອາມ
ໄດ້ຕໍ່ສູ້ກັນຈົນສິ້ນຊີວິດ [7]ກິດຈະການຕ່າງໆຂອງ ອາບີຢາ ແລະສັບພະທຸກສິ່ງທີ່ພະອົງໄດ້ເຮັດກໍ
ໄດ້ບັນທຶກໄວ້ໃນໜັງສືຂ່າວຄາວແຫ່ງກະສັດ ຢູດາບໍ່ແມ່ນບໍ ແລະມີການຕໍ່ສູ້ລະຫວ່າງ ອາບີຢາ
ແລະ ເຢໂຣໂບອາມ.

## ອາບີຢາເສຍຊີວິດ ແລະອາຊາຂຶ້ນປົກຄອງ[ກ]

[8]ແລະ ອາບີຢາກໍລ່ວງລັບໄປຢູ່ກັບບັນພະບູລຸດ (ປູ່ຍ່າຕານາຍ) ແລະພວກເຂົາໄດ້ຝັງສົບພະ
ອົງໄວ້ໃນເມືອງ ດາວິດ ແລະ ອາຊາ ລູກຊາຍຂອງພະອົງກໍຂຶ້ນປົກຄອງແທນ.

[9]ໃນປີທີຊາວ ແຫ່ງລາຊະການ ເຢໂຣໂບອາມ ກະສັດຂອງ ອິສຣາເອນ ອາຊາ ໄດ້ຂຶ້ນປົກຄອງ
ຢູດາ [10]ແລະໄດ້ປົກຄອງຢູ່ໃນ ເຢຣູຊາເລັມ ສີ່ສິບເອັດປີ ຍ່າຂອງພະອົງຄືນາງ ມາອາກາ ລູກສາວ
ຂອງ ອາບີຊາໂລມ [11]ແລະ ອາຊາ ໄດ້ ເຮັດ ສິ່ງ ທີ່ ຖືກຕ້ອງ ໃນ ສາຍ ພຣະເນດ ພຣະຜູ້ເປັນເຈົ້າ
ເໝືອນດັ່ງ ດາວິດ ບັນພະບູລຸດຂອງພະອົງໄດ້ເຮັດຜ່ານມານັ້ນ [12]ພະອົງໄດ້ກວາດລ້າງຜູ້ຊາຍໂສ-
ເພນີຈາກແຜ່ນດິນ ແລະຮື້ຖອນຮູບເຄົາລົບທັງໝົດທີ່ບັນພະບູລຸດໄດ້ເຮັດໄວ້ນັ້ນ [13]ແລະໄດ້ໃຫ້
ນາງ ມາອາກາ ຍ່າຂອງພະອົງອອກຈາກໜ້າທີ່ກະສັດ ເພາະນາງມີຮູບເຄົາລົບທີ່ໜ້າກຽດຊັງ
ສ້າງໄວ້ໃນເສົາຮູບເຄົາລົບ ແລະ ອາຊາ ໄດ້ທັບມ້າງຮູບເຄົາລົບຂອງນາງລົງ ແລະໄດ້ເຜົາຖິ້ມຢູ່ທີ່
ຮ່ອມພູ ກິດໂຣນ [14]ແຕ່ບໍ່ໄດ້ຮື້ປູຊະນີຍະສະຖານສູງ ເຫລົ່ານັ້ນ ແຕ່ວ່າຈິດໃຈຂອງ ອາຊາ ບໍລິສຸດ
ສັດຊື່ຕໍ່ ພຣະຜູ້ເປັນເຈົ້າ ຈົນສິ້ນຊີວິດຂອງພະອົງ [15]ພະອົງນຳເງິນ ຄຳ ແລະເຄື່ອງໃຊ້ຕ່າງໆ ທີ່
ເປັນສັນຍາຖວາຍຂອງພໍ່ຂອງພະອົງ ແລະສິ່ງຂອງສັນຍາຖວາຍຂອງພະອົງເອງມາຍັງພຣະວິ-
ຫານຂອງ ພຣະຜູ້ເປັນເຈົ້າ.

## ການເສິກລະຫວ່າງອາຊາ ແລະບາອາຊາ[ຂ]

[16]ເກີດມີການ ເສິກລະຫວ່າງ ອາຊາ ແລະ ບາອາຊາ ກະສັດແຫ່ງ ອິສຣາເອນ ຕະຫລອດສະ-
ໄໝຂອງພະອົງທັງສອງ ຈົນສິ້ນຊີວິດ [17]ບາອາຊາ ກະສັດແຫ່ງ ອິສຣາເອນ ໄດ້ຍົກທັບຂຶ້ນໄປຕໍ່ສູ້
ກັບ ຢູດາ ແລະໄດ້ສ້າງເມືອງ ຣາມາ ເພື່ອບໍ່ໃຫ້ຜູ້ໃດເຂົ້າ ໄປເຝົ້າກະສັດ ຫລືອອກມາຈາກ ອາ-
ຊາ ກະສັດແຫ່ງ ຢູດາ [18]ແລ້ວ ອາຊາ ໄດ້ນຳເງິນ ແລະຄຳ ຊຶ່ງເຫລືອຢູ່ໃນຊັບສິນແຫ່ງພຣະວິຫານ
ຂອງ ພຣະຜູ້ເປັນເຈົ້າ ແລະຊັບສິ່ງຂອງພະລາຊະວັງມອບໄວ້ໃນມືຂອງຂ້າລາຊະການຂອງພະ
ອົງ ແລະກະສັດ ອາຊາ ໄດ້ໃຊ້ພວກເຂົາໄປເຝົ້າ ເບັນ-ຮາດັດ ລູກຊາຍຂອງ ຕາບຣິມໂມນ ຜູ້ເປັນ
ລູກຊາຍຂອງ ເຮຊີໂອນ ກະສັດແຫ່ງ ຊີເຣຍ ທີ່ຢູ່ໃນ ເມືອງ ດາມາເຊ ວ່າ: [19]"ມີສັນຍາລະຫວ່າງຂ້າ-
ນ້ອຍ ແລະພະອົງ ລະຫວ່າງພໍ່ຂອງຂ້ານ້ອຍ ແລະພໍ່ຂອງພະອົງ ເບິ່ງແມ ຂ້ານ້ອຍໄດ້ ສົ່ງບັນ-
ນາການ ເປັນ ເງິນ ແລະຄຳມາໃຫ້ພະອົງ ຂໍພະອົງສະເດັດໄປຍົກເລີກພັນທະມິດກັບ ບາອາຊາ
ກະສັດແຫ່ງ ອິສຣາເອນ ເພື່ອລາວຈະໄດ້ຍົກທັບກັບໄປຈາກຂ້ານ້ອຍ" [20]ແລ້ວ ເບັນຮາດັດ ກໍຝັງ

[ກ]2ຂຄວ 14:1 [ຂ]2ຂຄວ 16:16

ຄວາມກະສັດ ອາຊາ ແລະໄດ້ສົ່ງຜູ້ບັງຄັບບັນຊາທະຫານຂອງພະອົງໄປຕໍ່ສູ້ຫົວເມືອງ ອິສຣາ-
ເອນ ແລະໄດ້ໂຈມຕີເມືອງອີໂຢນ, ເມືອງດານ, ເມືອງອາເບັນ-ເບັດ-ມາອະກາ ແລະທ້ອງຖິ່ນ
ຄົນເນໂຣດ ທັງໝົດລວມທັງດິນແດນ ນັບທາລີ ທັງໝົດ 21ແລະຢູ່ມາເມື່ອ ບາອາຊາ ໄດ້ຍິນຂ່າວ
ນັ້ນແລ້ວ ພະອົງກໍຢຸດສ້າງເມືອງຣາມາ ແລະໄປທີ່ເມືອງຕີຣະຊາ 22ແລ້ວກະສັດ ອາຊາ ໄດ້ປະ-
ກາດທົ່ວຄົນຢູດາ ໂດຍບໍ່ເວັ້ນຜູ້ໃດເລີຍ ພວກເຂົາກໍໄດ້ມາມ້າງເອົາຫີນຂອງເມືອງຣາມາ ແລະ
ໄມ້ຂອງເມືອງນັ້ນຊຶ່ງ ບາອາຊາ ໄດ້ສ້າງຄ້າງຢູ່ກະສັດ ອາຊາ ກໍໄດ້ນຳເອົາມາສ້າງເມືອງ ເກບາ
ແຫ່ງເບັນຢາມິນ ແລະເມືອງມິດຊະປາ.

## ອາຊາເສຍຊີວິດ ເຢໂຮຊາຟັດກໍຂຶ້ນປົກຄອງແທນ

23ລາຊະກິດຕ່າງໆຂອງ ອາຊາ ແລະອຳນາດທັງໝົດຂອງພະອົງ ພ້ອມທັງບັນດາສິ່ງຊຶ່ງພະ
ອົງໄດ້ກະທຳແລະຫົວເມືອງທີ່ພະອົງໄດ້ກໍ່ສ້າງ ກໍໄດ້ບັນທຶກໄວ້ໃນໜັງສືຂ່າວຄາວຂອງກະສັດຢູ-
ດາບໍ່ແມ່ນບໍ ແຕ່ເມື່ອເຖົ້າແກ່ຫລາຍແລ້ວ ກໍເກີດພະຍາດຂຶ້ນທີ່ຕີນຂອງເພິ່ນ 24ແລະ ອາຊາກໍ
ລ່ວງລັບໄປຢູ່ກັບບັນພະບູລຸດຂອງພະອົງ ແລະພວກເຂົາຝັງສົບໄວ້ກັບບັນພະບູລຸດຂອງພະອົງ
ໃນເມືອງດາວິດພໍ່ຂອງພະອົງ ແລະ ເຢໂຮຊາຟັດ ລູກຊາຍຂອງພະອົງກໍຂຶ້ນປົກຄອງແທນ.

## ນາດາບໄດ້ປົກຄອງອິສຣາເອນ

25ນາດາບ ລູກຊາຍຂອງ ເຢໂຣໂບອາມ ໄດ້ເລີ່ມປົກຄອງ ອິສຣາເອນ ໃນປີທີສອງ ແຫ່ງລາຊະ-
ການຂອງ ອາຊາ ກະສັດ ແຫ່ງ ຢູດາ ແລະພະອົງໄດ້ປົກຄອງ ອິສຣາເອນ ເປັນ ເວລາສອງປີ
26ພະອົງໄດ້ເຮັດຊົ່ວໃນສາຍພຣະເນດຂອງ ພຣະຜູ້ເປັນເຈົ້າ ແລະເຮັດຕາມຮີດຄອງແຫ່ງພໍ່ຂອງ
ພະອົງ ແລະຕາມຄວາມບາບ ໂດຍໄດ້ນຳພາຊາວ ອິສຣາເອນ ໃຫ້ເຮັດບາບດ້ວຍ.

## ບາອາຊາກະບົດ ແລະຍຶດເອົາອານາຈັກອິສຣາເອນ

27ບາອາຊາ ລູກຊາຍ ອາຮີຢາ ຄອບຄົວຂອງ ອິດຊາຄາ ຄິດກະບົດຕໍ່ສູ້ ນາດາບ ແລະໄດ້ຂ້າ-
ພະອົງທີ່ເມືອງ ກິບເບໂທນ ຊຶ່ງເປັນເຂດແດນເມືອງຂອງຄົນ ຟີລິດສະຕິນ ເພາະ ນາດາບ ແລະ
ຄົນ ອິສຣາເອນ ທັງໝົດກຳລັງອ້ອມເມືອງ ກິບເບໂທນ ຢູ່ 28ດັ່ງນັ້ນ ບາອາຊາ ຈຶ່ງຕັດຊີວິດ ນາ-
ດາບ ໃນປີທີສາມແຫ່ງລາຊະການຂອງ ອາຊາ ກະສັດ ແຫ່ງ ຢູດາ ແລະຂຶ້ນປົກຄອງແທນພະອົງ
29ຕໍ່ມາ ເມື່ອ ບາອາຊາ ໄດ້ເປັນກະສັດແລ້ວ ພະອົງກໍຂ້າຄອບຄົວຂອງ ເຢໂຣໂບອາມ ຈົນໝົດ ບໍ່
ມີໃຜຈັກຄົນທີ່ລອດພົ້ນມາແມ່ນແຕ່ຄົນດຽວກໍບໍ່ມີເລີຍ ພະອົງທຳລາຍໝົດສິ້ນ ຕາມພຣະຄຳຂອງ
ພຣະຜູ້ເປັນເຈົ້າ ຊຶ່ງພຣະອົງກ່າວ ໂດຍ ອາຮີຢາ ຊາວ ຊີໂລ ຜູ້ຮັບໃຊ້ຂອງພຣະອົງ 30ເປັນ ເພາະ
ບາບທັງຫລາຍທີ່ ເຢໂຣໂບອາມ ໄດ້ເຮັດນັ້ນ ແລະໄດ້ພາພວກ ອິສຣາເອນ ເຮັດບາບດ້ວຍ ແລະ
ຍ້ອນພະອົງເຮັດໃຫ້ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງ ອິສຣາເອນ ພຣະພິໂລດ.

31ລາຊະກິດຕ່າງໆຂອງ ນາດາບ ແລະບັນດາສິ່ງຊຶ່ງພະອົງໄດ້ເຮັດກໍໄດ້ບັນທຶກໄວ້ໃນໜັງສື
ຂ່າວຄາວຂອງ ກະສັດແຫ່ງ ອິສຣາເອນບໍ່ແມ່ນບໍ.

## ການເສິກລະຫວ່າງອາຊາ ແລະບາອາຊາ

32ອາຊາ ແລະ ບາອາຊາ ກະສັດແຫ່ງ ອິສຣາເອນ ໄດ້ເຮັດເສິກຕໍ່ສູ້ກັນຈົນສິ້ນຊີວິດຂອງພະອົງ
ທັງສອງ.

[33]ໃນປີທີສາມແຫ່ງລາຊະການຂອງ ອາຊາ ກະສັດແຫ່ງ ຢູດາ ບາອາຊາ ລູກຊາຍ ອາຣີຢາ ໄດ້
ເລີ່ມປົກຄອງ ອິສຣາເອນ ທັງໝົດທີ່ເມືອງ ຕີຣະຊາ ແລະໄດ້ປົກຄອງຢູ່ຊາວສີ່ປີ
[34]ພະອົງໄດ້
ເຮັດຄວາມຊົ່ວໃນສາຍພຣະເນດຂອງ ພຣະຜູ້ເປັນເຈົ້າ ແລະດຳເນີນໃນຮີດຄອງຂອງ ເຢໂຣໂບ-
ອາມ ແລະໃນບາບໂດຍໄດ້ນຳພາພວກອິສຣາເອນ ໃຫ້ເຮັດບາບດ້ວຍ.

# ບົດທີ 16

## ບາອາຊາຖືກສາບແຊ່ງແລ້ວຈຶ່ງເສຍຊີວິດ

[1]ພຣະຄຳ ຂອງ ພຣະຜູ້ເປັນເຈົ້າ ໄດ້ ມາ ເຖິງ ເຢຮູ ລູກ ຊາຍ ຮານານີ ກ່າວ ໂທດ ບາອາຊາ ວ່າ
[2]“ໃນເມື່ອເຮົາໄດ້ຍົກເຈົ້າຂຶ້ນມາຈາກຂີ້ຝຸ່ນດິນ ແລະໄດ້ຕັ້ງເຈົ້າໄວ້ໃຫ້ເປັນກະສັດປົກຄອງ ອິສຣາ-
ເອນປະຊາຊົນ ຂອງເຮົາ ແລະເຈົ້າໄດ້ດຳເນີນຕາມຮີດຄອງຂອງ ເຢໂຣໂບອາມ ແລະໄດ້ພາ
ພວກຂອງ ເຮົາຄືພວກ ອິສຣາເອນ ໃຫ້ເຮັດບາບດ້ວຍ ຊຶ່ງເຮັດໃຫ້ເຮົາ ໂກດຮ້າຍດ້ວຍການບາບ
ຂອງພວກເຂົາ
[3]ດັ່ງນີ້ ເຮົາຈະຕັດ ບາອາຊາ ແລະຜູ້ຢູ່ພາຍໃນຄອບຄົວຂອງລາວ ແລະເຮົາຈະ
ເຮັດໃຫ້ຄອບຄົວຂອງ ເຈົ້າ ເໝືອນ ກັບຄອບຄົວຂອງ ເຢໂຣໂບອາມ ລູກຂອງ ເນບັດ
[4]ຜູ້ໃດໃນ
ຄອບຄົວ ບາອາຊາ ທີ່ຕາຍ ໃນ ເມືອງ ໝາຈະມາກັດກິນ ແລະຜູ້ໃດທີ່ຕາຍໃນທົ່ງນານົກໃນອາ-
ກາດຈະມາ ຈິກກິນ.”

[5]ລາຊະກິດຕ່າງໆຂອງ ບາອາຊາ ແລະບັນດາສິ່ງທີ່ພະອົງໄດ້ເຮັດ ແລະອຳນາດຂອງພະອົງ
ກໍໄດ້ບັນທຶກໄວ້ໃນ ໜັງສືຂ່າວຄາວແຫ່ງກະສັດ ອິສຣາເອນບໍ່ແມ່ນບໍ
[6]ແລະ ບາອາຊາກໍລ່ວງລັບ
ໄປຢູ່ກັບບັນພະບູລຸດຂອງພະອົງ ແລະພວກເຂົາກໍຝັງສົບພະອົງໄວ້ທີ່ເມືອງ ຕີຣະຊາ ແລະ ເອ-
ລາ ລູກຊາຍຂອງພະອົງກໍຂຶ້ນປົກຄອງແທນ
[7]ຫລາຍກວ່ານັ້ນອີກ ພຣະຄຳຂອງ ພຣະຜູ້ເປັນເຈົ້າ
ໄດ້ມາເຖິງ ໂດຍຜູ້ທຳນວາຍ ເຢຮູ ລູກຊາຍ ຮານານີ ກ່າວໂທດ ບາອາຊາ ແລະຕໍ່ສູ້ເຊື້ອວົງຂອງ
ພະອົງ ພ້ອມທັງເລື່ອງຄວາມຊົ່ວທັງໝົດທີ່ພະອົງໄດ້ເຮັດໃນສາຍພຣະເນດຂອງ ພຣະຜູ້ເປັນເຈົ້າ
ເຮັດໃຫ້ພຣະອົງພຣະພິໂລດດ້ວຍການກະທຳຈາກມືແຫ່ງຕົນໂດຍເຮັດສິ່ງຊົ່ວຊ້າເໝືອນກັບຄອບ-
ຄົວຂອງ ເຢໂຣໂບອາມ ແລະເລື່ອງທີ່ພະອົງໄດ້ທຳລາຍຄອບຄົວນີ້.

## ເອລາໄດ້ຂຶ້ນປົກຄອງອິສຣາເອນ

[8]ໃນປີທີຊາວຫົກແຫ່ງລາຊະການຂອງ ອາຊາ ກະສັດຂອງ ຢູດາ ເອລາ ລູກຊາຍ ບາອາຊາ ໄດ້
ເລີ່ມຂຶ້ນປົກຄອງ ອິສຣາເອນ ໃນ ເມືອງ ຕີຣະຊາ ແລະໄດ້ປົກຄອງຢູ່ສອງປີ
[9]ແຕ່ຊິມຣີ ຂ້າໃຊ້
ຂອງພະອົງ, ຜູ້ບັນຊາການກອງລົດຮົບຂອງພະອົງເຄິ່ງໜຶ່ງໄດ້ຄິດກະບົດຕໍ່ສູ້ພະອົງ ເມື່ອພະອົງ
ປະທັບຢູ່ທີ່ເມືອງ ຕີຣະຊາ ພະອົງໄດ້ດື່ມຈົນເມົາໃນເຮືອນຂອງ ອາຣຊາ ຜູ້ປົກຄອງລາຊະສຳນັກ
ໃນ ເມືອງ ຕີຣະຊາ
[10]ໃນປີທີຊາວເຈັດ ແຫ່ງລາຊະການຂອງ ອາຊາ ກະສັດຂອງ ຢູດາ ຊິມຣີ ໄດ້
ເຂົ້າມາຟັນພະອົງຈົນລົ້ມລົງ ແລະຂ້າພະອົງ ແລ້ວຊິມຣີກໍຂຶ້ນປົກຄອງແທນ.

## ຊິມຣີສະເດັດປະທັບເທິງລາຊະບັນລັງຂອງອິສຣາເອນ

[11]ແລະຢູ່ມາເມື່ອຊິມຣີໄດ້ເລີ່ມປົກຄອງ, ເມື່ອພະອົງສະເດັດປະທັບເທິງລາຊະບັນລັງ ພະອົງ
ກໍໄດ້ຂ້າບັນດາຄອບຄົວຂອງ ບາອາຊາ ໃຫ້ໝົດສິ້ນ ພະອົງບໍ່ໄດ້ໃຫ້ເຫລືອແມ່ນແຕ່ຜູ້ຊາຍຄົນດຽວ

ທີ່ເປັນພີ່ນ້ອງ ຫລືມິດສະຫາຍຂອງ ບາອາຊາ ເລີຍ 12ຊິມຣີ ໄດ້ທຳລາຍຄອບຄົວຂອງ ບາອາຊາ
ທັງໝົດ ຕາມພຣະຄຳຂອງ ພຣະຜູ້ເປັນເຈົ້າ ຊຶ່ງພຣະອົງໄດ້ບອກໄວ້ໃນການຕໍ່ສູ້ ບາອາຊາ ໂດຍ
ເຢຮູຜູ້ທຳນວາຍ 13ຍ້ອນບາບທັງໝົດຂອງ ບາອາຊາ ແລະບາບຂອງ ເອລາ ລູກຊາຍຂອງພະອົງ
ຊຶ່ງພະອົງທັງສອງໄດ້ເຮັດບາບ ໂດຍທີ່ທັງສອງໄດ້ພາພວກ ອິສຣາເອນ ໃຫ້ເຮັດບາບດ້ວຍເຮັດ
ໃຫ້ ພຣະຜູ້ເປັນເຈົ້າ ພຣະເຈົ້າ ແຫ່ງ ອິສຣາເອນ ໂກດຮ້າຍ ໃນຄວາມຍິ່ງຈອງຫອງຂອງພະອົງທັງ
ສອງນັ້ນ.

14ລາຊະກິດຕ່າງໆຂອງ ເອລາ ແລະບັນດາສິ່ງຊຶ່ງພະອົງໄດ້ເຮັດ ກໍໄດ້ບັນທຶກໄວ້ໃນໜັງສື
ຂ່າວຄາວແຫ່ງ ກະສັດ ອິສຣາເອນບໍ່ແມ່ນບໍ.

15ໃນປີທີຊາວເຈັດແຫ່ງລາຊະການຂອງ ອາຊາ ກະສັດປະເທດ ຢູດາ ຊິມຣີ ໄດ້ປົກຄອງເຈັດມື້
ໃນ ເມືອງ ຕີຣະຊາ ຝ່າຍພວກທະຫານໄດ້ຕັ້ງຄ້າຍອ້ອມເມືອງ ກິບເບໂທນ ຊຶ່ງເປັນຂອງຄົນ ຟີ-
ລິດສະຕິນ 16ແລະພວກທະຫານຊຶ່ງຕັ້ງຄ້າຍຢູ່ນັ້ນໄດ້ຍິນພວກເຂົາກ່າວກັນວ່າ “ຊິມຣີ ໄດ້ກະບົດ
ແລະໄດ້ລອບສັງຫານ ກະສັດແລ້ວ” ເພາະສະນັ້ນ ອິສຣາເອນທັງປວງກໍສະຖາປະນາອົມຣີ ຜູ້
ບັນຊາການກອງທັບໃຫ້ເປັນກະສັດຂອງ ອິສຣາເອນ ໃນຄ້າຍ ໃນມື້ນັ້ນເລີຍ 17ອົມຣີ ຈຶ່ງໄປຈາກ
ກິບເບໂທນ ແລະ ອິສຣາເອນ ທັງປວງກໍຂຶ້ນໄປນຳ ພວກ ເຂົາ ເຂົ້າປິດອ້ອມ ເມືອງ ຕີຣະຊາ
18ແລະຢູ່ມາ ເມື່ອ ຊິມຣີ ເຫັນວ່າເມືອງນັ້ນແຕກແລ້ວກໍສະເດັດເຂົ້າໄປໃນພະລາຊະວັງຂອງກະ-
ສັດ ແລະໄດ້ເຜົາລາຊະວັງ ແລະພະອົງເອງກໍຕາຍໃນກອງໄຟ 19ຍ້ອນບາບທັງຫລາຍຊຶ່ງພະອົງ
ໄດ້ເຮັດໄວ້ ຄືໄດ້ເຮັດຊົ່ວໃນສາຍພຣະເນດຂອງ ພຣະຜູ້ເປັນເຈົ້າ ດຳເນີນຕິດຕາມ ເຢໂຣໂບອາມ
ແລະຍ້ອນບາບທີ່ພະອົງໄດ້ເຮັດ ຄືໄດ້ພາຄົນ ອິສຣາເອນ ໃຫ້ເຮັດບາບ ເໝືອນກັນ.

20ລາຊະກິດຂອງ ຊິມຣີ ແລະການກະບົດຊຶ່ງພະອົງໄດ້ເຮັດ ກໍໄດ້ບັນທຶກໄວ້ໃນໜັງສືຂ່າວ
ຄາວແຫ່ງກະສັດ ອິສຣາເອນບໍ່ແມ່ນບໍ.

## ຕິບນີກັບອົມລີຕໍ່ສູ້ເພື່ອຢາກໄດ້ລາຊະບັນລັງແລ້ວຕິບນີກໍສິ້ນຊີວິດ

21ແລ້ວຊົນຊາດ ອິສຣາເອນ ກໍແບ່ງອອກເປັນສອງຝ່າຍ ຝ່າຍໜຶ່ງຕິດຕາມ ຕິບນີ ລູກຊາຍ ກີ-
ນາດ ເຊີນເພິ່ນໃຫ້ເປັນກະສັດ ແລະອີກເຄິ່ງໜຶ່ງຕິດຕາມອົມຣີ 22ແຕ່ປະຊາຊົນຜູ້ຕິດຕາມອົມຣີ
ໄດ້ຮັບຊະນະປະຊາຊົນຜູ້ຕິດຕາມ ຕິບນີ ລູກຊາຍ ກີນາດ ຕິບນີ ຈຶ່ງສິ້ນຊີວິດ ແລະ ອົມຣີກໍຂຶ້ນ
ເປັນກະສັດ.

## ອົມລີຕັ້ງເມືອງຫລວງໄວ້ທີ່ຊາມາເຣຍ

23ໃນປີທີສາມສິບເອັດແຫ່ງລາຊະການຂອງ ອາຊາ ກະສັດ ແຫ່ງ ຢູດາ ອົມຣີ ໄດ້ເລີ່ມຕົ້ນປົກ-
ຄອງຢູ່ເໜືອ ອິສຣາເອນ ແລະໄດ້ປົກຄອງຢູ່ສິບສອງປີ ພະອົງໄດ້ປົກຄອງໃນເມືອງ ຕີຣະຊາຫົກ
ປີ 24ພະອົງໄດ້ຊື້ພູເຂົາຊາມາເຣຍ ຈາກ ເຊເມ ເປັນເງິນສອງຕະລັນຕົນ ແລະໄດ້ກໍ່ສ້າງພູເຂົານັ້ນ
ໃຫ້ເປັນ ເມືອງ ແລະໄດ້ເອີ້ນຊື່ເມືອງທີ່ພະອົງໄດ້ກໍ່ສ້າງນັ້ນວ່າຊາມາເຣຍ ຕາມຊື່ຂອງ ເຊເມ ຜູ້
ເປັນເຈົ້າຂອງພູເຂົານັ້ນ 25ອົມຣີ ໄດ້ເຮັດສິ່ງທີ່ຊົ່ວຮ້າຍໃນສາຍພຣະເນດ ພຣະຜູ້ເປັນເຈົ້າ ແລະ
ໄດ້ເຮັດຊົ່ວຫລາຍກວ່າບັນດາກະສັດ ຜູ້ທີ່ຢູ່ກ່ອນພະອົງ 26ເພາະວ່າພະອົງໄດ້ດຳເນີນຕາມ ເຢ-
ໂຣໂບອາມ ລູກຊາຍ ເນບັດ ທັງໝົດ ແລະຕາມການບາບທີ່ພະອົງໄດ້ພາຊາວ ອິສຣາເອນ ໃຫ້ເຮັດ

ບາບດ້ວຍ; ເຮັດໃຫ້ ພຣະຜູ້ເປັນເຈົ້າ ພຣະເຈົ້າ ແຫ່ງ ອິສຣາເອນ ຊົງພຣະພິໂລດດ້ວຍຄວາມຍິ່ງ
ຈອງຫອງຂອງພວກເຂົາ.

27ລາຊະກິດຕ່າງໆຂອງ ອົມຣີທີ່ໄດ້ເຮັດ ແລະອຳນາດຊຶ່ງພະອົງໄດ້ສະແດງ ກໍໄດ້ບັນທຶກໄວ້
ໃນໜັງສືຂ່າວຄາວແຫ່ງກະສັດອິສຣາເອນບໍ່ແມ່ນບໍ.

### ອາຮາບຂຶ້ນປົກຄອງແທນອົມລີ

28ແລະ ອົມຣີກໍລ່ວງລັບໄປຢູ່ກັບບັນພະບູລຸດຂອງພະອົງ ແລະພວກເຂົາຝັງສົບພະອົງໄວ້ໃນ
ຊາມາເຣຍ ແລະ ອາຮາບ ລູກຊາຍຂອງພະອົງກໍຂຶ້ນປົກຄອງແທນ.

29ໃນປີທີສາມສິບແປດ ແຫ່ງລາຊະການຂອງ ອາຊາກະສັດຂອງຢູດາ ອາຮາບ ລູກຊາຍຂອງ
ອົມຣີ ໄດ້ເລີ່ມປົກຄອງ ອິສຣາເອນ ແລະ ອາຮາບ ລູກຊາຍຂອງ ອົມຣີ ໄດ້ປົກຄອງ ອິສຣາເອນ
ໃນ ເມືອງ ຊາມາເຣຍ ຊາວສອງປີ 30ແລະ ອາຮາບ ລູກຊາຍຂອງ ອົມຣີ ໄດ້ເຮັດຊົ່ວໃນສາຍພຣະ-
ເນດຂອງ ພຣະຜູ້ເປັນເຈົ້າຫລາຍກວ່າບັນດາ ກະສັດທີ່ຢູ່ກ່ອນພະອົງ.

### ອາຮາບແຕ່ງງານກັບເຢເຊເບນ

31ແລະຢູ່ມາຄາວໜຶ່ງການທີ່ພະອົງ ໄດ້ເຮັດຕາມການບາບທັງຫລາຍຂອງ ເຢໂຣໂບອາມ ລູກ
ຊາຍ ເນບັດ ພະອົງໄດ້ຮັບ ເຢເຊເບນ ລູກສາວຂອງ ເອັດບາອານກະສັດຂອງຊາວຊີໂດນ ມາເປັນ
ເມຍ ແລະ ໄປບົວລະບັດ ພະບາອານ ແລະນະມັດສະການພະນັ້ນ 32ພະອົງ ໄດ້ສ້າງ ແທ່ນບູຊາ
ພະບາອານ ໃນພະວິຫານ ພະບາອານ ຊຶ່ງໄດ້ສ້າງໄວ້ໃນ ເມືອງ ຊາມາເຣຍ 33ແລະ ອາຮາບ ໄດ້
ກໍ່ສ້າງ ເສົາຮູບ ເຄົາລົບ, ອາຮາບ ໄດ້ເຮັດໃນສິ່ງທີ່ເຮັດໃຫ້ ພຣະຜູ້ເປັນເຈົ້າ ພຣະເຈົ້າ ແຫ່ງ ອິ-
ສຣາເອນ ພຣະພິໂລດຫລາຍກວ່າບັນດາກະສັດແຫ່ງ ອິສຣາເອນ ຊຶ່ງຢູ່ມາກ່ອນພະອົງ.

34ໃນລາຊະການຂອງພະອົງ, ຮີເອນ ຊາວ ເບັດເອນ ໄດ້ສ້າງ ເມືອງ ເຢຣິໂກ ພະອົງໄດ້ວາງ
ຮາກ ເມືອງນັ້ນ ໂດຍຕ້ອງ ເສຍ ອາບີຣາມ ລູກກົກຂອງພະອົງ ແລະຕັ້ງປະຕູເມືອງ ໂດຍຕ້ອງເສຍ
ເສກຸບ ລູກຫລ້າຂອງພະອົງຕາມພຣະທຳຂອງ ພຣະຜູ້ເປັນເຈົ້າ ທີ່ພຣະອົງ ໄດ້ກ່າວ ໂດຍ ໂຢຊວຍ
ລູກຊາຍຂອງ ນູນ.

## ບົດທີ 17

### ເອລີຢາທຳນວາຍເຖິງການແຫ້ງແລ້ງ

1ຍັງມີຜູ້ປະກາດພຣະຄຳຜູ້ໜຶ່ງຊື່ວ່າ ເອລີຢາ ເພິ່ນເປັນຄົນ ເມືອງ ຕີຊະເບ ໃນ ເຂດ ກີເລອາດ
ໄດ້ທູນຕໍ່ເຈົ້າ ອາຮາບ ວ່າ, “ດ້ວຍພຣະນາມຂອງ ພຣະຜູ້ເປັນເຈົ້າຜູ້ຊົງພຣະຊົນຢູ່ ພຣະເຈົ້າ ແຫ່ງ
ອິສຣາເອນ ທີ່ຂ້ານ້ອຍຮັບໃຊ້ຢູ່ນີ້ ໃນສອງສາມປີຂ້າງໜ້ານີ້ ຈະບໍ່ມີນ້ຳໝອກ ຫລືນ້ຳຝົນ ຈົນ
ກວ່າຈະໄດ້ຮັບຄຳສັ່ງຈາກຂ້ານ້ອຍເສຍກ່ອນ.” 2-3ແລ້ວ ພຣະຜູ້ເປັນເຈົ້າ ຊົງກ່າວຕໍ່ ເອລີຢາ ວ່າ,
“ຈົ່ງອອກຈາກບ່ອນນີ້ໄປທາງທິດຕາເວັນອອກ ແລະໄປລີ້ຢູ່ໃນຫ້ວຍ ເກຣິດ ຊຶ່ງຢູ່ທາງທິດຕາ-
ເວັນອອກຂອງ ແມ່ນ້ຳຢໍແດນ. 4ເຈົ້າຈົ່ງດື່ມນ້ຳໃນຫ້ວຍ ແລະເຮົາຈະສັ່ງໃຫ້ການຳເອົາອາຫານ
ໄປລ້ຽງເຈົ້າຢູ່ບ່ອນນັ້ນ.” 5ເອລີຢາ ຈຶ່ງປະຕິບັດຕາມທີ່ ພຣະຜູ້ເປັນເຈົ້າ ຊົງກ່າວ ເພິ່ນໄດ້ໄປພັກຢູ່
ໃກ້ກັບຫ້ວຍ ເກຣິດ 6ພວກກາກໍນຳເອົາເຂົ້າຈີ່ ແລະຊີ້ນມາໃຫ້ເພິ່ນທັງຕອນເຊົ້າແລະຕອນແລງ

ສ່ວນນ້ຳນັ້ນເພິ່ນໄດ້ດື່ມໃນຫ້ວຍ.
7ແຕ່ຫລັງຈາກນັ້ນບໍ່ເຫິງນ້ຳໃນຫ້ວຍກໍບົກລົງເພາະຝົນບໍ່ຕົກ.

## ເອລີຢາຢູ່ເຮືອນແມ່ໝ້າຍຊາວຊາເຣຟັດ

8-9ແລ້ວ ພຣະຜູ້ເປັນເຈົ້າ ຊົງກ່າວຕໍ່ ເອລີຢາ ວ່າ, "ຈົ່ງໄປຍັງເມືອງຊາເຣຟັດ ໃກ້ໆ ເມືອງຊີ-
ໂດນ ແລະພັກຢູ່ທີ່ນັ້ນ ເພາະ ເຮົາໄດ້ສັ່ງໃຫ້ແມ່ໝ້າຍຜູ້ໜຶ່ງຢູ່ໃນ ເມືອງນັ້ນ ເປັນຜູ້ລ້ຽງ ເຈົ້າ."
10ແລ້ວ ເອລີຢາ ຈຶ່ງເດີນທາງໄປເມືອງຊາເຣຟັດ ເມື່ອໄປເຖິງປະຕູເມືອງ ເພິ່ນໄດ້ເຫັນແມ່ໝ້າຍຜູ້
ໜຶ່ງກຳລັງຫາຟືນຢູ່ ເພິ່ນຈຶ່ງເວົ້າກັບນາງວ່າ, "ຂ້ອຍຂໍກິນນ້ຳແດ່ນ້ອງເອີຍ." 11ແຕ່ໃນຂະນະທີ່
ນາງກຳລັງໄປເອົານ້ຳ ເພິ່ນກໍສັ່ງນາງອີກວ່າ, "ເອົາເຂົ້າຈີ່ຈັກປ່ຽງມານຳແດ່ເດີ." 12ນາງຈຶ່ງຕອບ
ວ່າ, "ດ້ວຍ ພຣະຜູ້ເປັນເຈົ້າ ຂອງທ່ານຜູ້ຊົງພຣະຊົນຢູ່ ຂ້ານ້ອຍຂໍເວົ້າຕາມຄວາມຈິງວ່າ ຂ້າ-
ນ້ອຍບໍ່ມີເຂົ້າຈີ່ ມີແຕ່ແປ້ງກຳດຽວຢູ່ໃນຖ້ວຍ ແລະນ້ຳມັນໜ້ອຍໜຶ່ງຢູ່ໃນໄຫ ຂ້ານ້ອຍມານີ້ເພື່ອ
ເກັບເອົາຟືນຈັກດົ້ນສອງດົ້ນ ໄປດັງໄຟຄົວກິນສຳລັບຂ້ານ້ອຍ ແລະລູກຊາຍ ອາຫານຄາບນີ້
ເປັນອາຫານຄາບສຸດທ້າຍຂອງພວກຂ້ານ້ອຍ ແລະຕໍ່ໄປພວກຂ້ານ້ອຍກໍຕ້ອງຫິວຕາຍ." 13ແຕ່
ເອລີຢາ ເວົ້າຕໍ່ລາວວ່າ, "ບໍ່ຕ້ອງກັງວົນດອກ ຈົ່ງໄປເຮັດຕາມທີ່ເຈົ້າໄດ້ເວົ້າ ແຕ່ໃຫ້ເຮັດຈັກໜ່ອຍ
ມາໃຫ້ຂ້ອຍກິນກ່ອນ ແລ້ວຈຶ່ງເຮັດໃຫ້ເຈົ້າກັບລູກຊາຍກິນນຳຫລັງ. 14ເພາະວ່າເລື່ອງນີ້ ພຣະຜູ້-
ເປັນເຈົ້າ ຂອງ ອິສຣາເອນ ກ່າວໄວ້ວ່າ, ແປ້ງໃນຖ້ວຍຈະບໍ່ໝົດນ້ຳມັນໃນໄຫກໍຈະບໍ່ຂາດແຄນ
ເພາະ ເຮົາຈະ ໃຫ້ມີສິ່ງ ເຫລົ່ານີ້ຈົນຮອດມື້ຝົນຕົກລົງມາ." 15ແລ້ວຍິງຄົນນັ້ນກໍໄດ້ໄປເຮັດຕາມທີ່
ເອລີຢາ ໄດ້ບອກ ນາງເອງພ້ອມດ້ວຍລູກຊາຍ. 16ແລະ ເອລີຢາ ຈຶ່ງໄດ້ເຂົ້າຈີ່ໄວ້ກິນເປັນເວລາ
ຫລາຍມື້ ແປ້ງໃນຖ້ວຍກໍບໍ່ໝົດ ແລະນ້ຳມັນໃນໄຫກໍບໍ່ຂາດແຄນ ຊຶ່ງເປັນໄປຕາມທີ່ ພຣະຜູ້-
ເປັນເຈົ້າ ຊົງກ່າວໄວ້ ດັ່ງ ເອລີຢາ ໄດ້ບອກແລ້ວ.

## ລູກຊາຍຂອງແມ່ໝ້າຍຄືນຊີວິດ

17ຢູ່ມາ ລູກຊາຍຂອງຍິງເຈົ້າຂອງເຮືອນກໍໄຂ້ ອາການປ່ວຍຂອງເດັກນີ້ຮ້າຍແຮງຫລາຍຈົນ
ເສຍຊີວິດ. 18ຜູ້ເປັນແມ່ຈຶ່ງເວົ້າກັບ ເອລີຢາ ວ່າ, "ທ່ານຜູ້ເປັນຄົນຂອງ ພຣະເຈົ້າ ເປັນຫຍັງທ່ານ
ຈຶ່ງເຮັດກັບຂ້ານ້ອຍແບບນີ້? ທ່ານມານີ້ ເພື່ອເຮັດໃຫ້ ພຣະເຈົ້າ ຫວນລະນຶກເຖິງຄວາມຜິດຂອງ
ຂ້ານ້ອຍແຕ່ເກົ່າກ່ອນ ແລະເພື່ອໃຫ້ພຣະອົງຂ້າລູກຊາຍຂອງຂ້ານ້ອຍຊັ້ນບໍ?" 19ເອລີຢາ ຈຶ່ງເວົ້າ
ກັບແມ່ຂອງເດັກນ້ອຍວ່າ, "ເອົາລູກເຈົ້າມາໃຫ້ຂ້ອຍ" ແລ້ວນາງກໍເອົາລູກມາໃຫ້ເພິ່ນອູ້ມ ເອລີ-
ຢາ ໄດ້ອູ້ມຂຶ້ນໄປເທິງຫ້ອງນອນຊັ້ນເທິງ ແລ້ວວາງເດັກຊາຍຜູ້ນີ້ນອນລົງເທິງຕຽງ. 20ແລ້ວເພິ່ນ
ກໍໄດ້ຮ້ອງທູນຕໍ່ ພຣະຜູ້ເປັນເຈົ້າ ວ່າ, "ຂ້າແດ່ ພຣະຜູ້ເປັນເຈົ້າ ຂອງຂ້ານ້ອຍ ເປັນຫຍັງພຣະອົງ
ຈຶ່ງຊົງເຮັດໃຫ້ແມ່ໝ້າຍຄົນນີ້ ໄດ້ຮັບຄວາມລຳບາກຍາກໃຈຫລາຍເຊັ່ນນີ້ ນາງເປັນຜູ້ໃຫ້ອາຫານ
ການກິນແກ່ຂ້ານ້ອຍ ແຕ່ດຽວນີ້ ພຣະອົງໄດ້ຂ້າລູກຊາຍຂອງນາງ." 21ເອລີຢາ ໄດ້ນອນເຕັງ
ຮ່າງກາຍຂອງເດັກນ້ອຍນີ້ສາມເທື່ອ ແລະອ້ອນວອນຕໍ່ ພຣະຜູ້ເປັນເຈົ້າ ວ່າ, "ຂ້າແດ່ ພຣະຜູ້-
ເປັນເຈົ້າ ຂອງຂ້ານ້ອຍ ຂ້ານ້ອຍທູນຂໍຕໍ່ພຣະອົງ ຂໍຊົງປະທານຈິດວິນຍານຄືນໃຫ້ແກ່ເດັກນ້ອຍ
ນີ້ເທີ້ນ" ພຣະຜູ້ເປັນເຈົ້າ ຊົງໄດ້ຍິນຄຳອ້ອນວອນຂອງ ເອລີຢາ. 22ພຣະອົງກໍຊົງປະທານວິນຍານ
ຄືນສູ່ຮ່າງກາຍຂອງເດັກນ້ອຍນີ້ ແລະລາວກໍຟື້ນຄືນມາ. 23ເອລີຢາ ນຳເດັກນ້ອຍນັ້ນລົງມາໃຫ້

ແມ່ຂອງລາວຢູ່ຊັ້ນລຸ່ມ ແລະເວົ້າວ່າ, “ເບິ່ງແມ! ລູກຂອງເຈົ້າຍັງມີຊີວິດຢູ່.” 24ຍິງແມ່ໝ້າຍກໍເວົ້າ
ວ່າ, “ດຽວນີ້ ຂ້ານ້ອຍຮູ້ແລ້ວວ່າ ທ່ານເປັນຄົນຂອງພຣະເຈົ້າ ແລະຂ້ານ້ອຍຮູ້ວ່າ ພຣະຜູ້ເປັນ-
ເຈົ້າຊົງກ່າວຜ່ານທາງທ່ານຢ່າງແທ້ຈິງ.”

# ບົດທີ 18

## ເອລີຢາກັບຄືນໄປເຝົ້າກະສັດອາຮາບ

1ຢູ່ມາຫລາຍວັນ ໃນປີທີສາມຂອງການແຫ້ງແລ້ງ ພຣະຜູ້ເປັນເຈົ້າຊົງກ່າວຕໍ່ເອລີຢາວ່າ,
“ຈົ່ງໄປເຝົ້າເຈົ້າອາຮາບ ແລະເຮົາຈະເຮັດໃຫ້ຝົນຕົກ.” 2ດັ່ງນັ້ນ ເອລີຢາຈຶ່ງຟ້າວເດີນທາງໄປ
ເຝົ້າເຈົ້າອາຮາບ.

3ໃນເມືອງຊາມາເຣຍມີການອຶດຢາກຢ່າງຮ້າຍແຮງທີ່ສຸດ ເຈົ້າອາຮາບຈຶ່ງຮັບສັ່ງໃຫ້ໂອບາດີ-
ຢາເຂົ້າເຝົ້າ (ໂອບາດີຢາເປັນຜູ້ກຳກັບເບິ່ງແຍງພະລາຊະວັງ. 4ລາວເປັນຜູ້ເຄົາລົບຢຳເກງ
ພຣະຜູ້ເປັນເຈົ້າທີ່ສຸດ ຄືຄາວເມື່ອພະນາງເຢເຊເບນ ຂ້າຜູ້ປະກາດພຣະຄຳຂອງພຣະຜູ້ເປັນ-
ເຈົ້າຢ່າງໂຫດຮ້າຍທາລຸນ ໂອບາດີຢາໄດ້ເອົາພວກຜູ້ປະກາດພຣະຄຳຮ້ອຍຄົນໄປເຊື່ອງໄວ້ຢູ່ໃນ
ຖ້ຳບ່ອນລະຫ້າສິບຄົນ ແລ້ວໄດ້ນຳເອົາອາຫານກັບນ້ຳໄປລ້ຽງພວກເຫລົ່ານີ້). 5ອາຮາບຮັບສັ່ງ
ໂອບາດີຢາວ່າ, “ຈົ່ງພາກັນອອກໄປຊອກຫານ້ຳ ແລະໄປທຸກຮ່ອມພູທົ່ວທັງປະເທດ ເພື່ອວ່າ
ບາງທີເຮົາອາດພົບຫຍ້າສຳລັບລ້ຽງຝູງມ້າ ແລະລໍຂອງພວກເຮົາ ແລະເພື່ອພວກເຮົາຈະບໍ່ຕ້ອງ
ໄດ້ຂ້າຝູງສັດເຫລົ່ານີ້.” 6ແລ້ວພວກເຂົາກໍແບ່ງປັນເຂດແດນກັນເພື່ອທ່ຽວຊອກຫາ ອາຮາບໄດ້
ສະເດັດໄປທາງໜຶ່ງ ແລະໂອບາດີຢາກໍໄປອີກທາງໜຶ່ງ.

7ໃນຂະນະທີ່ໂອບາດີຢາເດີນທາງໄປ ລາວກໍພົບເອລີຢາ ລາວຈື່ເພິ່ນໄດ້ ລາວຈຶ່ງກາບລົງ
ແລະຖາມວ່າ, “ທ່ານເອລີຢາ ນາຍຂອງຂ້ານ້ອຍ ແມ່ນທ່ານແທ້ບໍ? 8ເອລີຢາຕອບວ່າ, “ແມ່ນ
ແລ້ວ” ແລະເວົ້າຕໍ່ໄປອີກວ່າ, “ຈົ່ງໄປບອກເຈົ້າຊີວິດຂອງເຈົ້າວ່າ ຂ້ອຍຢູ່ບ່ອນນີ້.” 9ແຕ່ໂອບາ-
ດີຢາຕອບວ່າ, “ຂ້ານ້ອຍໄດ້ເຮັດຜິດຫຍັງ ທ່ານຈຶ່ງມອບຂ້ານ້ອຍ ຂ້າໃຊ້ຂອງທ່ານໄວ້ໃນກຳມື
ຂອງເຈົ້າອາຮາບ ແລະໃຫ້ພະອົງສັງຫານຊີວິດຂ້ານ້ອຍເສຍ? 10ໃນນາມພຣະຜູ້ເປັນເຈົ້າຂອງ
ທ່ານຜູ້ຊົງພຣະຊົນຢູ່ ຂ້ານ້ອຍຂໍສາບານວ່າ ບໍ່ມີປະຊາຊາດ ແລະລາຊະອານາຈັກໃດ ທີ່ເຈົ້າຊີ-
ວິດຂອງຂ້ານ້ອຍບໍ່ໄດ້ສົ່ງຄົນໄປຊອກຫາທ່ານ ຄັນຖ້າ ຄົນໃນຊາດນັ້ນບອກວ່າ, “ທ່ານຢູ່ບ່ອນ
ນີ້” ເຈົ້າຊີວິດຂອງຂ້ານ້ອຍກໍໃຫ້ຜູ້ປົກຄອງ ຫລືປະຊາຊົນນັ້ນສາບານຮັບວ່າ ທ່ານຢູ່ບ່ອນນີ້ແທ້.
11ແລະດຽວນີ້ທ່ານບອກຂ້ານ້ອຍໄປຫາເຈົ້າຊີວິດຂອງຂ້ານ້ອຍວ່າ, “ທ່ານຢູ່ບ່ອນນີ້.” 12ແຕ່ເມື່ອ
ຂ້ານ້ອຍຈາກທ່ານໄປ ພຣະວິນຍານຂອງພຣະຜູ້ເປັນເຈົ້າກໍຕ້ອງພາທ່ານໜີໄປບ່ອນໃໝ່ ແລະ
ຂ້ານ້ອຍກໍຈະບໍ່ຮູ້ຈັກວ່າທ່ານໄປບ່ອນໃດ ເມື່ອຂ້ານ້ອຍໄປບອກເຈົ້າອາຮາບມາ ເມື່ອພະອົງມາ
ບໍ່ພົບທ່ານ ພະອົງຈະຕ້ອງສັງຫານຂ້ານ້ອຍ ທ່ານກໍຮູ້ດີແລ້ວວ່າ ຂ້ານ້ອຍເປັນຜູ້ຢຳເກງພຣະຜູ້-
ເປັນເຈົ້າມາຕັ້ງແຕ່ຍັງໜຸ່ມ. 13ທ່ານບໍ່ຮູ້ບໍວ່າ ຄາວເມື່ອເຢເຊເບນໄດ້ຂ້າຜູ້ປະກາດພຣະຄຳຂອງ
ພຣະຜູ້ເປັນເຈົ້າຢ່າງໂຫດຮ້າຍທາລຸນ ຂ້ານ້ອຍໄດ້ເອົາຄົນຂອງພຣະເຈົ້າໄປເຊື່ອງໄວ້ໃນຖ້ຳ
ຮ້ອຍຄົນ ບ່ອນລະຫ້າສິບຄົນ ແລະໄດ້ນຳເອົາອາຫານ ແລະນ້ຳໄປລ້ຽງພວກເຫລົ່ານີ້. 14ດຽວນີ້

ເປັນຫຍັງທ່ານຈຶ່ງໃຊ້ຂ້ານ້ອຍໄປບອກພະລາຊາວ່າ ທ່ານຢູ່ບ່ອນບ່ອນນີ້? ພະອົງຕ້ອງຂ້າຂ້າ-
ນ້ອຍເປັນແນ່.” 15ເອລີຢາຈຶ່ງເວົ້າວ່າ, “ໃນນາມພຣະຜູ້ເປັນເຈົ້າແຫ່ງຈັກກະວານຊຶ່ງຂ້ອຍຮັບໃຊ້
ຢູ່ນີ້ ຂ້ອຍຈະຕ້ອງໄປສະແດງຕົວຕໍ່ພະພັກຂອງກະສັດອາຮາບໃຫ້ໄດ້ໃນມື້ນີ້.”

16ດັ່ງນັ້ນ ໂອບາດີຢາຈຶ່ງໄປເຝົ້າອາຮາບ ແລະທູນເລື່ອງໃຫ້ເພິ່ນຊາບ ແລະອາຮາບກໍສະ-
ເດັດໄປພົບເອລີຢາ. 17ເມື່ອພະອົງເຫັນເອລີຢາ ພະອົງກໍໄດ້ກ່າວວ່າ, “ເຈົ້ານີ້ແຫລະ ເປັນຜູ້
ສ້າງຄວາມລຳບາກໃຫ້ແກ່ອິສຣາເອນ.” 18ເອລີຢາທູນຕອບວ່າ, “ບໍ່ແມ່ນຂ້ານ້ອຍເປັນຜູ້ສ້າງ
ຄວາມລຳບາກໃຫ້ແກ່ຊາວອິສຣາເອນເລີຍ ພະອົງ ແລະຄອບຄົວຂອງພະອົງຕ່າງຫາກເປັນຜູ້
ສ້າງ ເພາະວ່າ ພະອົງໄດ້ປະຖິ້ມພຣະບັນຍັດຂອງພຣະຜູ້ເປັນເຈົ້າ ແລະໄປຕິດຕາມພະບາ-
ອານ. 19ດຽວນີ້ ຂໍພະອົງຊົງອອກຄຳສັ່ງໃຫ້ຊາວອິສຣາເອນທຸກຄົນໄປປະຊຸມກັນກັບຂ້ານ້ອຍຢູ່
ເທິງພູກາເມນ ແລະຝ່າຍພະບາອານສີ່ຮ້ອຍຫ້າສິບຄົນ ແລະຝ່າຍພະອັດຊະໂຕເຣດສີ່ຮ້ອຍ
ຄົນ ທີ່ເຄີຍກິນເຂົ້າຮ່ວມໂຕະກັບພະລາຊະນີເຢເຊເບນນັ້ນດ້ວຍ.

## ການຖວາຍເຄື່ອງບູຊາທີ່ພູກາເມນ

20ເຈົ້າອາຮາບ ໄດ້ເອີ້ນພວກອິສຣາເອນທຸກຄົນມາໂຮມກັນ ແລະຮວບຮວມພວກຜູ້ປະກາດ
ພະຄຳຝ່າຍພະບາອານທັງໝົດ ຂຶ້ນໄປເທິງພູກາເມນ. 21ເອລີຢາກ້າວອອກໄປຢືນຕໍ່ໜ້າປະ-
ຊາຊົນ ແລະເວົ້າວ່າ ພວກທ່ານຍັງຈະເປັນຄົນສອງໃຈຢູ່ຢ່າງນີ້ອີກດົນປານໃດ? ຖ້າພຣະຜູ້-
ເປັນເຈົ້າ ເປັນພຣະເຈົ້າຈົ່ງຕິດຕາມພຣະອົງ ຖ້າວ່າພະບາອານເປັນພຣະເຈົ້າ ກໍຈົ່ງຕິດຕາມ
ພະບາອານ.” ແຕ່ປະຊາຊົນບໍ່ຕອບເພິ່ນຢ່າງໃດໝົດ 22ແລ້ວເອລີຢາຈຶ່ງເວົ້າຕໍ່ໄປວ່າ, “ຂ້າພະ-
ເຈົ້າຜູ້ດຽວເປັນຜູ້ປະກາດພຣະຄຳຂອງພຣະຜູ້ເປັນເຈົ້າທີ່ຍັງເຫລືອຢູ່. ແຕ່ຝ່າຍພວກຜູ້ປະກາດ
ຂອງພະບາອານ ມີຕັ້ງ 450 ຄົນ 23ຈົ່ງເອົາງົວເຖິກມາສອງໂຕໃຫ້ພວກເຮົາ ແລະໃຫ້ພວກເຂົາ
ເລືອກເອົາໂຕໜຶ່ງຕັດເປັນຕ່ອນ ແລ້ວເອົາໄປວາງໄວ້ເທິງກອງຟືນ ແຕ່ບໍ່ໃຫ້ດັງໄຟໃສ່ ສຳລັບ
ຝ່າຍຂ້າພະເຈົ້າ ຂ້າພະເຈົ້າກໍຈະຈັດງົວໂຕໜຶ່ງອີກ ແລະຈະບໍ່ດັງໄຟໃສ່ຄືກັນ. 24ໃຫ້ພວກເຂົາ
ເອີ້ນຫາພະຂອງພວກເຂົາ ສ່ວນຂ້າພະເຈົ້າກໍຈະເອີ້ນຫາພຣະເຈົ້າຂອງຂ້າພະເຈົ້າ ພະໃດທີ່ຈະ
ຕອບ ແລະຈະສົ່ງໄຟມາໃຫ້ ແມ່ນອົງນັ້ນແຫລະເປັນພຣະເຈົ້າແທ້ ປະຊາຊົນທຸກຄົນຈຶ່ງຕອບ
ວ່າ, “ພວກຂ້າພະເຈົ້າເຫັນດີນຳ.”

25ແລ້ວເອລີຢາຈຶ່ງເວົ້າຕໍ່ພວກຜູ້ປະກາດຝ່າຍພະບາອານວ່າ, “ຈົ່ງເລືອກເອົາງົວຕອນ ແລະ
ເລີ່ມລົງມືກ່ອນ ເພາະພວກທ່ານກໍມີຫລາຍຄົນດ້ວຍກັນ ພວກທ່ານຢ່າດັງໄຟໃສ່ ແຕ່ໃຫ້ຮ້ອງຫາ
ພະຜູ້ເປັນເຈົ້າຂອງທ່ານ. 26ພວກເຂົາຈຶ່ງເອົາງົວໄປຄົວ ແລະວາງໄວ້ເທິງແທ່ນບູຊາ ແລ້ວພາ-
ກັນເອີ້ນຫາພະບາອານແຕ່ເຊົ້າຈົນຮອດທ່ຽງວ່າ, “ໂອພະບາອານເອີຍ ຂໍຈົ່ງຕອບພວກຂ້າ-
ນ້ອຍດ້ວຍ” ພວກເຂົາຮ້ອງ ແລະຟ້ອນເຕັ້ນອ້ອມໄປມາ ຕໍ່ໜ້າແທ່ນບູຊາທີ່ພວກເຂົາເຮັດຂຶ້ນນັ້ນ
ແຕ່ກໍບໍ່ໄດ້ຍິນສຽງຕອບ ຫລືສຽງໃດໆ ໝົດ. 27ເມື່ອຮອດຕອນທ່ຽງ ເອລີຢາກໍເວົ້າເຍາະເຍີ້ຍ
ພວກເຂົາວ່າ, “ຮ້ອງຂຶ້ນດັງໆ ແດ່ແມ ເພິ່ນເປັນພຣະເຈົ້າ ເພິ່ນອາດກຳລັງລະເມີເພີ້ຝັນ ອາດມີ
ທຸລະ ຫລື ອອກໄປທ່ຽວ ແລະບາງທີເພິ່ນອາດຍັງນອນຫລັບຢູ່ ພວກທ່ານຕ້ອງປຸກເພິ່ນລຸກ.”
28ພວກເຂົາຈຶ່ງຮ້ອງດັງຂຶ້ນກວ່າເກົ່າ ແລະເອົາດາບເອົາມີດຟັນຕົວເອງຈົນເລືອດໄຫລອອກຕາມ

ປະເພນີທີ່ພວກເຂົາເຄີຍເຮັດມາ. 29ພວກເຂົາໄດ້ເຮັດດັ່ງນີ້ໄປຈົນຮອດເວລາຖວາຍບູຊາໃນຕອນ
ແລງ ແຕ່ບໍ່ມີຄຳຕອບ ແລະບໍ່ມີສຽງໃດໆ ເລີຍ.
30ແລ້ວເອລີຢາຈຶ່ງບອກປະຊາຊົນວ່າ, “ຈົ່ງພາກັນຫຍັບເຂົ້າມາໃກ້ໆ ຂ້າພະເຈົ້າ” ປະຊາຊົນ
ທຸກຄົນກໍຫຍັບເຂົ້າມາໃກ້ ແລ້ວເພິ່ນໄດ້ສ້ອມແຊມແທ່ນບູຊາຂອງພຣະຜູ້ເປັນເຈົ້າ ທີ່ຖືກທຳ-
ລາຍນັ້ນຄືນໃໝ່. 31ພ້ອມດຽວກັນນັ້ນ ເພິ່ນໄດ້ເອົາຫີນສິບສອງກ້ອນ ຊຶ່ງຄົບຕາມຈຳນວນສິບ
ສອງຕະກູນໃນເຊື້ອສາຍຂອງຢາໂຄບ (ຢາໂຄບຍັງມີຊື່ໜຶ່ງອີກວ່າ, “ອິສຣາເອນ” ຊຶ່ງແມ່ນ
ພຣະຜູ້ເປັນເຈົ້າຊົງຕັ້ງໃຫ້). 32ດ້ວຍຫີນສິບສອງກ້ອນນີ້ ເພິ່ນໄດ້ສ້າງແທ່ນບູຊາ ເພື່ອຂາບໄຫວ້
ນະມັດສະການພຣະຜູ້ເປັນເຈົ້າ ເພິ່ນຂຸດຮ່ອງອ້ອມແທ່ນບູຊາ ຊຶ່ງບັນຈຸພໍດີກັບນໍ້າສອງຖັງ.
33ແລ້ວເພິ່ນກໍລຽນຟືນ ແລະຕັດຕ່ອນຊີ້ນງົວຍອງໄວ້ເທິງກອງຟືນນັ້ນ ເພິ່ນສັ່ງວ່າ, “ຈົ່ງຕັກນໍ້າ
ໃສ່ໄຫໃຫ້ເຕັມທັງສີ່ໜ່ວຍ ແລະຖອກລົງເທິງເຄື່ອງເຜົາບູຊາ ແລະເທິງກອງຟືນ” 34ພວກເຂົາຈຶ່ງ
ປະຕິບັດຕາມ ແລ້ວເພິ່ນໄດ້ສັ່ງໃຫ້ພວກເຂົາເຮັດຄືເກົ່າອີກໃນເທື່ອທີສອງ ພວກເຂົາກໍເຮັດຕາມ
ແລະສັ່ງໃຫ້ເຮັດອີກຄືເກົ່າໃນເທື່ອທີສາມ ພວກເຂົາກໍປະຕິບັດຕາມອີກ. 35ນໍ້າໄດ້ໄຫລລົງຕາມ
ແທ່ນບູຊາຈົນເຕັມຮ່ອງທີ່ຂຸດໄວ້. 36ເມື່ອເຖິງຍາມຖວາຍບູຊາຕອນແລງ ຜູ້ປະກາດພຣະຄຳເອ-
ລີຢາກໍຍ່າງເຂົ້າມາຕໍ່ໜ້າແທ່ນ ແລ້ວກ່າວວ່າ, “ຂ້າແດ່ພຣະຜູ້ເປັນເຈົ້າ ພຣະເຈົ້າຂອງອັບຣາ-
ຮາມ ຂອງອີຊາກ ແລະຂອງຢາໂຄບ ໃນມື້ນີ້ ຂໍພຣະອົງຊົງສະແດງໃຫ້ທຸກຄົນຮູ້ວ່າ ພຣະອົງ
ຊົງເປັນພຣະເຈົ້າຂອງອິສຣາເອນ ແລະໃຫ້ຮູ້ວ່າ ຂ້ານ້ອຍເປັນຜູ້ຮັບໃຊ້ຂອງພຣະອົງ ຂໍສະ-
ແດງໃຫ້ພວກເຂົາຮູ້ວ່າທຸກສິ່ງທີ່ຂ້ານ້ອຍເຮັດນີ້ ແມ່ນເຮັດດ້ວຍຄຳສັ່ງຂອງພຣະອົງ. 37ຂ້າແດ່
ພຣະຜູ້ເປັນເຈົ້າ ຂໍພຣະອົງຊົງຕອບຂ້ານ້ອຍດ້ວຍ ເພື່ອປະຊາຊົນເຫລົ່ານີ້ຈະຮູ້ວ່າພຣະອົງຊົງ
ເປັນພຣະເຈົ້າອົງທ່ຽງແທ້ ຜູ້ຊົງປ່ຽນແປງຈິດໃຈພວກເຂົາໃຫ້ກັບຄືນມາ” 38ແລ້ວພຣະຜູ້ເປັນ-
ເຈົ້າໄດ້ສົ່ງໄຟລົງມາໄໝ້ເຄື່ອງເຜົາບູຊາ ໄໝ້ຟືນ ໄໝ້ກ້ອນຫີນ ແລະດູດນໍ້າໃນຮ່ອງອອກໝົດ.
39ເມື່ອປະຊາຊົນທຸກຄົນເຫັນດັ່ງນັ້ນ ກໍພາກັນຂາບລົງ ແລະຮ້ອງຂຶ້ນວ່າ, “ພຣະຜູ້ເປັນເຈົ້າຊົງ
ເປັນພຣະເຈົ້າທ່ຽງແທ້ ພຣະຜູ້ເປັນເຈົ້າອົງດຽວເທົ່ານັ້ນທີ່ຊົງເປັນພຣະເຈົ້າ.” 40ຫລັງຈາກນັ້ນ
ເອລີຢາຈຶ່ງສັ່ງໃຫ້ປະຊາຊົນຈັບພວກຜູ້ປະກາດພະຄຳຝ່າຍພະບາອານ ໂດຍບໍ່ໃຫ້ຜູ້ໃດໜີພົ້ນໄປ
ໄດ້ ດັ່ງນັ້ນ ປະຊາຊົນຈຶ່ງຈັບພວກເຂົາ ແລ້ວເອລີຢາກໍນຳພວກເຂົາໄປຂ້າຢູ່ໃກ້ຫ້ວຍກີໂຊນ.

## ເອລີຢາທູນຂໍນໍ້າຝົນຈາກພຣະຜູ້ເປັນເຈົ້າ

41ເອລີຢາໄດ້ເວົ້າຕໍ່ອາຮາບວ່າ, “ຂໍພະອົງສະເດັດເຂົ້າໄປກິນເຂົ້າກິນນໍ້າສາ ເພາະຂ້ານ້ອຍຮູ້
ວ່າຝົນຈະຕົກແລ້ວ. 42ໃນຂະນະທີ່ອາຮາບຂຶ້ນໄປກິນເຂົ້ານັ້ນ ເອລີຢາກໍໄດ້ຂຶ້ນໄປເທິງຍອດພູ
ກາເມນ ແລະກົ້ມຂາບລົງ ແລ້ວເພິ່ນໄດ້ເວົ້າຕໍ່ຄົນໃຊ້ວ່າ, 43“ຈົ່ງແລ່ນໄປເບິ່ງທະເລ”. ຄົນໃຊ້
ຈຶ່ງແລ່ນໄປເບິ່ງ ແຕ່ກໍບໍ່ມີຫຍັງໝົດ ເອລີຢາໄດ້ສັ່ງໃຫ້ລາວໄປເບິ່ງຈົນຮອດເຈັດເທື່ອ ໃນເທື່ອທີ
ເຈັດຄົນໃຊ້ໄດ້ບອກເພິ່ນວ່າ, 44“ດຽວນີ້ ມີກ້ອນເມກນ້ອຍໆ ກ້ອນໜຶ່ງສໍ່າຝາມື ໄດ້ຂຶ້ນມາທາງ
ທະເລ.” ເອລີຢາຈຶ່ງບອກລາວວ່າ, “ຈົ່ງໄປບອກກະສັດອາຮາບໃຫ້ຕຽມລົດມ້າລົງໄປກ່ອນຝົນ
ຈະຕົກຮໍາ.” 45ຢູ່ມາຄາວໜຶ່ງ ຟ້າກໍມືດ ແລະມີເມກທົ່ວທ້ອງຟ້າ ແລະມີລົມພະຍຸ ຝົນຮ່າໃຫຍ່ໄດ້
ຕົກລົງ ອາຮາບຈຶ່ງຂຶ້ນລົດມ້າສະເດັດໄປເມືອງເຢດຊະເຣເອນ. 46ອຳນາດຂອງພຣະຜູ້ເປັນເຈົ້າ

ຊຶ່ງສວມທັບ ເອລີຢາ ເພິ່ນໄດ້ຈ້ອນເສື້ອຂຶ້ນຮອດແອວ ແລ້ວແລ່ນຂຶ້ນໜ້າ ອາຮາບ ຈົນຮອດທາງ
ເຂົ້າເມືອງ ເຢດຊະເຣເອນ.

# ບົດທີ 19

## ເອລີຢາໜີໄປພູຊີນາຍ

1ເມື່ອເຈົ້າ ອາຮາບ ເລົ່າເລື່ອງ ເອລີຢາ ເອົາດາບຂ້າຜູ້ປະກາດພະຄຳຂອງ ພະບາອານ ສູ່ ເຢເຊ-
ເບນ ຜູ້ເປັນເມຍຟັງ. 2ເຢເຊເບນ ກໍສັ່ງຄົນໄປບອກ ເອລີຢາ ວ່າ, “ມື້ອື່ນ ໃນເວລາດຽວກັນນີ້ ຖ້າ
ຂ້ອຍບໍ່ໄດ້ຂ້າເຈົ້າດັ່ງທີ່ເຈົ້າໄດ້ຂ້າພວກຜູ້ປະກາດພະຄຳຂອງ ພະບາອານ ນັ້ນ ຂໍໃຫ້ພະທັງຫລາຍ
ເຮັດໃຫ້ຂ້ອຍຕາຍ.”

3ເອລີຢາ ຢ້ານຈຶ່ງໜີເອົາຕົວລອດໄປ ເບເອ-ເຊບາ ຊຶ່ງເປັນເມືອງໜຶ່ງໃນປະເທດ ຢູດາ ແລະ
ປະຄົນໃຊ້ຂອງເພິ່ນໄວ້ຢູ່ໃນເມືອງນີ້ ສ່ວນຕົວເພິ່ນເອງໄດ້ໜີໄປເມືອງດານ. 4ຊຶ່ງໃຊ້ເວລາເດີນ-
ທາງມື້ໜຶ່ງ ແລ້ວກໍມານັ່ງເຊົາເມື່ອຍຢູ່ ແລະຄິດຢາກຕາຍຢູ່ໃຕ້ຮົ່ມໄມ້ນີ້ເສຍ ເພິ່ນຈຶ່ງທູນ ພຣະຜູ້-
ເປັນເຈົ້າ ວ່າ, “ຂ້າແດ່ ພຣະຜູ້ເປັນເຈົ້າ ຂ້ານ້ອຍອີ່ມແລ້ວຊີວິດນີ້ ຈົ່ງເອົາຊີວິດຂອງຂ້ານ້ອຍໄປ
ເຖີ້ນ ຂ້ານ້ອຍບໍ່ມີຫຍັງດີໄປກວ່າພວກບັນພະບູລຸດຂອງຂ້ານ້ອຍເລີຍ.” 5ແລ້ວເພິ່ນກໍນອນຫລັບ
ໄປ ແຕ່ຍັງມີເທວະດາອົງໜຶ່ງມາຊຸກເພິ່ນ ແລະກ່າວວ່າ, “ລຸກຂຶ້ນກິນເຂົ້າແມ.” 6ເມື່ອເພິ່ນຫລຽວ
ໄປຮອບໆ ກໍເຫັນເຂົ້າຈີ່ກ້ອນໜຶ່ງ ແລະເຕົ້ານໍ້າຊຶ່ງຕັ້ງຢູ່ທາງເບື້ອງຫົວຂອງເພິ່ນ ເພິ່ນໄດ້ກິນ
ແລະດື່ມແລ້ວຈຶ່ງນອນລົງອີກ. 7ແຕ່ວ່າເທວະດາຂອງ ພຣະຜູ້ເປັນເຈົ້າ ໄດ້ຄືນມາຫາເພິ່ນອີກໃນ
ເທື່ອທີສອງ ແລະກ່າວຕໍ່ເພິ່ນວ່າ, “ລຸກຂຶ້ນກິນເຂົ້າແມ ເພາະທ່ານຍັງຈະຕ້ອງເດີນທາງໄປໄກ
ອີກ.” 8ເພິ່ນກໍລຸກຂຶ້ນກິນ ແລະດື່ມ ສະນັ້ນ ຍ້ອນອາຫານນີ້ ເພິ່ນຈຶ່ງໄດ້ມີເຫື່ອມີແຮງເດີນທາງຕໍ່
ໄປສີ່ສິບມື້ສີ່ສິບຄືນຈົນຮອດພູຂອງ ພຣະເຈົ້າ ທີ່ຊື່ວ່າ ຊີນາຍ.

## ເອລີຢາໄດ້ພົບພໍ້ກັບພຣະເຈົ້າ

9ຕໍ່ມາ ເອລີຢາ ໄດ້ເຂົ້າໄປນອນຄ້າງຄືນຢູ່ໃນຖໍ້າ ພຣະຜູ້ເປັນເຈົ້າ ຊົງກ່າວຕໍ່ເພິ່ນວ່າ, “ເອລີ-
ຢາ ເຈົ້າເຮັດຫຍັງຢູ່ທີ່ນີ້?” 10ເພິ່ນຕອບວ່າ, “ຂ້າແດ່ ພຣະຜູ້ເປັນເຈົ້າ ແຫ່ງຈັກກະວານ ຂ້ານ້ອຍ
ເຄີຍຮັບໃຊ້ພຣະອົງດ້ວຍໃຈຮ້ອນຮົນຢູ່ຕະຫລອດມາ ເພາະວ່າ ໄພ່ພົນ ອິສຣາເອນ ໄດ້ລະເມີດ
ຄຳໝັ້ນສັນຍາຂອງພຣະອົງ ພວກເຂົາໄດ້ທຳລາຍແທ່ນບູຊາ ແລະຂ້າພວກຜູ້ປະກາດພະຄຳ
ຂອງພຣະອົງ ມີແຕ່ຂ້ານ້ອຍຄົນດຽວທີ່ຍັງເຫລືອຢູ່ ແຕ່ປານນັ້ນພວກເຂົາຍັງບໍ່ລົດລະທີ່ຈະຂ້າ
ຂ້ານ້ອຍເສຍ.”

11ພຣະຜູ້ເປັນເຈົ້າ ຊົງກ່າວວ່າ, “ຈົ່ງອອກໄປຢືນຢູ່ເທິງພູຕໍ່ໜ້າເຮົາ” ແລ້ວພຣະອົງກໍສະເດັດ
ຜ່ານໄປ ພຣະຜູ້ເປັນເຈົ້າ ຊົງເຮັດໃຫ້ມີລົມແຮງພັດພູເຂົາຈົນຫີນແຕກເປັນກ້ອນນ້ອຍໆ ແຕ່
ພຣະອົງບໍ່ໄດ້ສະຖິດຢູ່ໃນລົມນັ້ນ ຫລັງຈາກນັ້ນ ແຜ່ນດິນກໍຫວັ່ນໄຫວ ແຕ່ພຣະອົງບໍ່ໄດ້ສະຖິດຢູ່
ໃນແຜ່ນດິນຫວັ່ນໄຫວນີ້. 12ຫລັງຈາກແຜ່ນດິນຫວັ່ນໄຫວແລ້ວ ກໍແມ່ນໄຟ ແຕ່ພຣະອົງບໍ່ໄດ້
ສະຖິດຢູ່ໃນໄຟ ຫລັງຈາກໄຟກໍມີສຽງລົມເບົາໆ. 13ເມື່ອ ເອລີຢາ ໄດ້ຍິນສຽງນີ້ ເພິ່ນຈຶ່ງເອົາເສື້ອ
ປົກໜ້າໄວ້ແລະອອກໄປຢືນຢູ່ປາກຖໍ້າ ແລ້ວກໍມີສຽງດັງມາຫາເພິ່ນວ່າ, “ເອລີຢາ ເຈົ້າເຮັດຫຍັງ

ຢູ່ນີ້?" [14]ເພິ່ນຈຶ່ງທູນຕອບວ່າ, "ຂ້າແດ່ພຣະຜູ້ເປັນເຈົ້າແຫ່ງຈັກກະວານ ຂ້ານ້ອຍເຄີຍຮັບໃຊ້
ພຣະອົງດ້ວຍໃຈຮ້ອນຮົນຕະຫລອດມາ ເພາະວ່າ ໄພ່ພົນອິສຣາເອນລະເມີດຄຳໝັ້ນສັນຍາຂອງ
ພຣະອົງ ພວກເຂົາໄດ້ທຳລາຍແທ່ນບູຊາ ແລະຂ້າພວກຜູ້ປະກາດພຣະຄຳຂອງພຣະອົງ ມີແຕ່
ຂ້ານ້ອຍຄົນດຽວທີ່ຍັງເຫລືອຢູ່ ແຕ່ປານນັ້ນ ພວກເຂົາກໍຍັງບໍ່ລົດລະທີ່ຈະຂ້າຂ້ານ້ອຍ." [15]ແລ້ວ
ພຣະຜູ້ເປັນເຈົ້າຊົງກ່າວວ່າ, "ໄປສາ ຈົ່ງໄປຕາມເສັ້ນທາງເກົ່າ ແລະມຸ່ງໜ້າສູ່ຖິ່ນກັນດານໃກ້
ເມືອງດາມາເຊ ໃຫ້ເຈົ້າເຂົ້າໄປໃນເມືອງແລ້ວເອົານ້ຳມັນທົດສົງຮາຊາເອນ ເປັນເຈົ້າຊີວິດແຫ່ງ
ປະເທດຊີເຣຍ. [16]ໃຫ້ເອົານ້ຳມັນທົດສົງ ເຢຮູ ລູກຊາຍຂອງນິມຊີເປັນເຈົ້າຊີວິດອິສຣາເອນ
ແລະເອົານ້ຳມັນທົດສົງ ເອລີຊາ ລູກຊາຍຂອງຊາຟາດຊາວອາເບັນເມໂຮລາ ເປັນຜູ້ປະກາດ
ພຣະຄຳສືບແທນເຈົ້າ. [17]ຜູ້ໃດທີ່ໜີຈາກດາບຂອງຮາຊາເອນ ຈະຖືກເຢຮູຂ້າ ຜູ້ໃດໜີຈາກດາບ
ຂອງເຢຮູ ຈະຖືກເອລີຊາຂ້າ. [18]ແຕ່ວ່າ ເຮົາຈະໃຫ້ມີຄົນເຫລືອຢູ່ໃນອິສຣາເອນເຖິງເຈັດພັນ
ຄົນ ຄືພວກທີ່ບໍ່ຂຸເຂົ່າລົງຕໍ່ໜ້າພະບາອານ ແລະບໍ່ຈູບຮູບພະນັ້ນ.

## ພຣະຜູ້ເປັນເຈົ້າຊົງເອີ້ນເອລີຢາ

[19]ຈາກນັ້ນ ເອລີຢາຈຶ່ງມາຫາເອລີຊາຊຶ່ງກຳລັງໄຖນາຢູ່ ລາວມີງົວທີ່ກຳລັງໄຖນາຢູ່ສິບສອງ
ຄູ່ ແຕ່ລາວເອງໄດ້ໃຊ້ງົວຄູ່ໜຶ່ງໄຖ ໂດຍມີງົວສິບເອັດຄູ່ໄຖອອກໄປກ່ອນ ເອລີຢາໄດ້ຍ່າງກາຍ
ລາວໄປ ແລະຖິ້ມເສື້ອຄຸມຂອງເພິ່ນໃສ່ລາວ. [20]ເອລີຊາກໍປະງົວຂອງຕົນ ແລະແລ່ນຕາມຫລັງ
ເອລີຢາໄປທັງເວົ້າວ່າ, "ຂໍໃຫ້ຂ້ານ້ອຍໄປຈູບລາພໍ່ແມ່ຂອງຂ້ານ້ອຍເສຍກ່ອນ ແລ້ວຂ້ານ້ອຍຈະ
ຕິດຕາມທ່ານໄປ." [21]ເອລີຢາຈຶ່ງຕອບວ່າ, "ກັບຄືນໄປສາ ຂ້ອຍບໍ່ຫ້າມເຈົ້າດອກ ແລ້ວເອລີຊາ
ກໍໄປຂ້າງົວສອງໂຕ ຈັດແຈງເປັນອາຫານໂດຍໃຊ້ໄຖເປັນຟືນ ລາວໄດ້ແບ່ງຊີ້ນໃຫ້ຄົນຂອງລາວ
ກິນ ສ່ວນລາວເອງກໍອອກຕິດຕາມໄປເພື່ອເປັນຜູ້ຊ່ວຍເອລີຢາ.

# ບົດທີ 20

## ເທື່ອທຳອິດທີ່ອາຮາບສູ້ຮົບກັບປະເທດຊີເຣຍ

[1]ເບັນຮາດັດກະສັດຊີເຣຍໄດ້ໂຮມກອງທັບທັງຫລາຍຂອງພະອົງ, ມີກະສັດສາມສິບສອງຄົນ
ທີ່ຂຶ້ນກັບພະອົງ ທັງມ້າ ແລະລົດຮົບ ແລະພະອົງກໍຂຶ້ນໄປອ້ອມຊາມາເຣຍສູ້ຮົບກັບເມືອງນັ້ນ
[2]ພະອົງໄດ້ສົ່ງຜູ້ສົ່ງຂ່າວເຂົ້າໄປໃນເມືອງຫາອາຮາບກະສັດອິສຣາເອນໂດຍກ່າວແກ່ເພິ່ນວ່າ
"ເບັນຮາດັດກ່າວດັ່ງນີ້ວ່າ [3]'ເງິນແລະຄຳຂອງທ່ານເປັນຂອງເຮົາ ບັນດາເມຍ ແລະເດັກນ້ອຍໆ
ທີ່ງາມທີ່ສຸດຂອງທ່ານກໍເປັນຂອງເຮົາດ້ວຍ'" [4]ແລະກະສັດແຫ່ງອິສຣາເອນໄດ້ຕອບໄປວ່າ "ຂ້າ
ແດ່ກະສັດ ເຈົ້ານາຍຂອງຂ້າພະເຈົ້າ ດັ່ງທີ່ທ່ານກ່າວມານັ້ນ ທຸກສິ່ງທີ່ຂ້າພະເຈົ້າມີຢູ່ນັ້ນກໍເປັນ
ຂອງທ່ານ."

[5]ບັນດາຜູ້ສົ່ງຂ່າວໄດ້ກັບມາອີກກ່າວວ່າ "ເບັນຮາດັດກ່າວດັ່ງນີ້ວ່າ 'ຂ້າພະເຈົ້າສົ່ງຂ່າວມາຍັງ
ທ່ານວ່າ "ຈົ່ງສົ່ງເງິນ ແລະຄຳຂອງທ່ານ ເມຍ ແລະເດັກນ້ອຍຂອງທ່ານໄປໃຫ້ຂ້າພະເຈົ້າ [6]ແຕ່
ວ່າມື້ອື່ນໃນໂມງນີ້ຂ້າພະເຈົ້າຈະສົ່ງຂ້າລາຊະການຂອງຂ້າພະເຈົ້າໄປຫາທ່ານ ພວກເຂົາຈະຄົ້ນ
ວັງຂອງ ທ່ານ ທັງບ້ານເຮືອນຂອງຂ້າລາຊະການຂອງທ່ານ ສິ່ງໃດເປັນທີ່ຮັກຂອງທ່ານ ພວກ

ເຂົາຈະຍຶດເອົາໄປຕໍ່ໜ້າຕໍ່ຕາທ່ານ’” 7ແລ້ວກະສັດແຫ່ງອິສຣາເອນກໍເອີ້ນປະຊຸມພວກຜູ້ໃຫຍ່ທັງ
ປວງຂອງແຜ່ນດິນມາກ່າວວ່າ “ຂໍເຊີນເບິ່ງແມ ເບິ່ງວ່າຊາຍຜູ້ນີ້ມາກໍ່ການຮ້າຍຫາຄວາມລຳບາກ
ເພາະວ່າລາວໃຫ້ຄົນມາເອົາເມຍ ແລະລູກຂອງຂ້ອຍພ້ອມ ທັງເງິນແລະຄຳຂອງຂ້ອຍ ແລະ
ຂ້ອຍກໍບໍ່ໄດ້ປະຕິເສດຫຍັງລາວ” 8ບັນດາຜູ້ໃຫຍ່ ແລະປະຊາຊົນທັງໝົດກໍທູນອາຮາບວ່າ “ຂໍ
ຢ່າໄດ້ຟັງ ຫລືຍິນຍອມເພິ່ນ” 9ພະອົງຈຶ່ງສັ່ງແກ່ຜູ້ສົ່ງຂ່າວຂອງເບັນຮາດັດວ່າ “ຈົ່ງໄປທູນກະ-
ສັດ ເຈົ້ານາຍຂອງຂ້າພະເຈົ້າວ່າ ‘ບັນດາສິ່ງທີ່ທ່ານ ເອົາມາຈາກຜູ້ຮັບໃຊ້ຂອງທ່ານໃນເທື່ອທຳ-
ອິດນັ້ນ ຂ້າພະເຈົ້າຈະເຮັດຕາມ ແຕ່ສິ່ງນີ້ ຂ້າພະເຈົ້າປະຕິບັດຕາມບໍ່ໄດ້’” ແລະຜູ້ສົ່ງຂ່າວກໍ
ຈາກໄປ ແລະກັບມາລາຍງານຄວາມນີ້ໃຫ້ກະສັດຟັງ.

10ເບັນຮາດັດສົ່ງຂ່າວກັບມາວ່າ “ຂໍໃຫ້ພະທັງຫລາຍລົງໂທດຂ້າພະເຈົ້າ ແລະໜັກກວ່ານັ້ນ
ອີກ ຖ້າຂີ້ຝຸ່ນດິນໃນເມືອງຊາມາເຣຍມີພໍສຳລັບຄົນທີ່ຕິດຕາມຂ້າພະເຈົ້າມາຄົນລະໜຶ່ງກຳມື”
11ແລະກະສັດແຫ່ງອິສຣາເອນໄດ້ຕອບໄປວ່າ “ຈົ່ງທູນເພິ່ນວ່າ ‘ຂໍທ່ານຜູ້ທີ່ຄາດແອວໄວ້ ຢ່າ
ອວດອ້າງເໝືອນ ຜູ້ທີ່ແກ້ປະແອວແລ້ວ’” 12ຕໍ່ມາເມື່ອເບັນຮາດັດໄດ້ຍິນຂ່າວນີ້ຂະນະທີ່ດື່ມຢູ່ກັບ
ບັນດາກະສັດທັງຫລາຍຢູ່ໃນເຕັນພະອົງກໍສັ່ງຂ້າລາຊະການຂອງຕົນວ່າ “ຈົ່ງເຂົ້າປະຈຳທີ່”
ແລະພວກເຂົາກໍເຂົ້າປະຈຳທີ່ເພື່ອຕໍ່ສູ້ກັບເມືອງນັ້ນ.

## ພຣະເຈົ້າຊົງສັນຍາວ່າອິສຣາເອນຈະຊະນະ

13ເບິ່ງແມ ຜູ້ທຳນວາຍຄົນໜຶ່ງໄດ້ເຂົ້າມາເຝົ້າອາຮາບກະສັດແຫ່ງອິສຣາເອນທູນວ່າ “ພຣະ-
ຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເຈົ້າເຫັນກອງທັບໃຫຍ່ນີ້ບໍ? ເບິ່ງແມ ເຮົາຈະມອບໄວ້ໃນມືຂອງເຈົ້າໃນ
ມື້ນີ້ ເຈົ້າຈະໄດ້ຮູ້ວ່າເຮົາຄືພຣະຜູ້ເປັນເຈົ້າ” 14ແລະອາຮາບຖາມວ່າ “ຈະຊົງໃຊ້ໃຜເຮັດ?” ລາວ
ທູນຕອບວ່າ “ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ດ້ວຍມືຂອງພວກຂ້າໃຊ້ຂອງເຈົ້ານາຍປະຈຳແຂວງ
ທັງຫລາຍ” ແລ້ວອາຮາບກ່າວວ່າ “ຜູ້ໃດຈະພາໄປເຮັດເສິກ?” ລາວທູນຕອບວ່າ “ທ່ານເອງ.”

## ອາຮາບຊະນະຊາວຊີເຣຍ

15ອາຮາບຈຶ່ງໄດ້ນັບພວກຂ້າໃຊ້ຂອງເຈົ້ານາຍປະຈຳແຂວງເຫລົ່ານັ້ນຊຶ່ງມີສອງຮ້ອຍສາມສິບ
ສອງຄົນນຳກັນ ແລະຫລັງຈາກນັ້ນໄດ້ຈັດທະຫານທັງໝົດ ຄືບັນດາລູກຫລານອິສຣາເອນລວມ
ເຈັດພັນຄົນ 16ພວກເຂົາໄດ້ອອກໄປໃນເວລາທ່ຽງ ຝ່າຍເບັນຮາດັດກຳລັງດື່ມເຫລົ້າເມົາຢູ່ໃນ
ເຕັນ ທັງພະອົງ ແລະ ກະສັດອີກສາມສິບສອງຄົນທີ່ຊ່ວຍພະອົງ 17ພວກຂ້າໃຊ້ຂອງເຈົ້ານາຍ
ປະຈຳບັນດາແຂວງໄດ້ອອກໄປກ່ອນ ແລະເບັນຮາດັດກໍໄດ້ສົ່ງອອກໄປ ພວກເຂົາ ລາຍງານ
ພະອົງວ່າ “ມີຄົນຈຳນວນຫລາຍທີ່ອອກມາຈາກຊາມາເຣຍ” 18ພະອົງຈຶ່ງກ່າວວ່າ “ຖ້າພວກເຂົາ
ອອກມາດ້ວຍສັນຕິຈົ່ງຈັບພວກເຂົາມາທັງເປັນ ຫລືຖ້າພວກເຂົາອອກມາເຮັດ ເສິກຈົ່ງຈັບພວກ
ເຂົາມາທັງເປັນຄືກັນ 19ຄົນເຫລົ່ານີ້ຈຶ່ງອອກໄປຈາກເມືອງຄື ພວກຂ້າໃຊ້ຂອງເຈົ້ານາຍປະຈຳ
ແຂວງ ແລະກອງທັບຈຶ່ງຕິດຕາມຄົນ ເຫລົ່ານີ້ 20ແລະພວກເຂົາຕ່າງກໍຂ້າຄູ່ຕໍ່ສູ້ຂອງຕົນ ຄົນຊີ-
ເຣຍໄດ້ປົບໜີ ແລະຄົນອິສຣາເອນໄລ່ຕິດຕາມພວກເຂົາໄປ ແຕ່ເບັນຮາດັດກະສັດແຫ່ງຊີເຣຍ
ໄດ້ຂີ່ມ້າໜີໄປກັບທະຫານມ້າ 21ກະສັດແຫ່ງອິສຣາເອນກໍອອກໄປໂຈມຕີມ້າ ແລະລົດຮົບ ແລະ
ປະຫານພວກຊີເຣຍຢ່າງຫລວງຫລາຍ.

## ອາຣາບໄດ້ຮັບຄຳຕັກເຕືອນໃຫ້ຕຽມສຳລັບການສູ້ຮົບອີກເທື່ອໜຶ່ງ

22ແລ້ວຜູ້ທຳນວາຍຜູ້ນັ້ນໄດ້ເຂົ້າມາເຝົ້າກະສັດແຫ່ງອິສຣາເອນທູນພະອົງວ່າ “ຂໍເສີມກຳລັງ
ຂອງທ່ານ ແລະຄິດຕຶກຕອງເບິ່ງວ່າ ທ່ານຈະເຮັດແນວໃດ ເພາະໝົດປີນີ້ກະສັດແຫ່ງຊີເຣຍຈະ
ຍົກກອງທັບມາຕໍ່ສູ້ກັບທ່ານອີກ” ຊຶ່ງເປັນເທື່ອທີສອງ ທີ່ອາຣາບສູ້ຮົບກັບປະເທດຊີເຣຍ 23ຂ້າ-
ລາຊະການຂອງກະສັດແຫ່ງຊີເຣຍກາບທູນພະອົງວ່າ “ພະທັງຫລາຍຂອງພວກເຂົາເປັນພະ
ແຫ່ງພູເຂົາ ດັ່ງນັ້ນພວກເຂົາຈຶ່ງຈະແຂງແຮງກວ່າພວກເຮົາ ແຕ່ຂໍໃຫ້ພວກເຮົາສູ້ຮົບກັບພວກ
ເຂົາໃນທົ່ງພຽງ ແລ້ວພວກເຮົາຈະຕ້ອງແຂງແຮງກວ່າພວກເຂົາແນ່ນອນ 24ຂໍເຮັດຢ່າງນີ້ ຂໍໃຫ້
ປົດກະສັດທຸກອົງອອກຈາກຕຳແໜ່ງແລະຕັ້ງນາຍທະຫານຂຶ້ນແທນ 25ແລະເກນກອງທັບເຂົ້າ
ແທນສ່ວນທີ່ລົ້ມຕາຍໄປໃນຄາວກ່ອນ ມ້າແທນມ້າ, ລົດຮົບແທນລົດຮົບ ແລ້ວພວກເຮົາ ຈະສູ້
ຮົບກັບພວກເຂົາໃນທົ່ງພຽງ ພວກເຮົາຈະຕ້ອງແຂງແຮງກວ່າພວກເຂົາແນ່ນອນ” ຝ່າຍພະອົງກໍ
ຟັງສຽງຂອງພວກເຂົາ ແລະເຮັດຕາມ.

26ແລະຢູ່ມາເມື່ອໝົດປີແລ້ວ ເບັນຮາດັດກໍເກນຄົນຊີເຣຍຍົກທັບຂຶ້ນໄປຮອດເມືອງອາເຟັກ
ເພື່ອສູ້ຮົບກັບອິສຣາເອນ 27ແລະລູກຫລານອິສຣາເອນກໍຖືກເກນ ແລະຢູ່ພ້ອມໜ້າກັນທັງໝົດ
ແລະອອກໄປຕໍ່ສູ້ກັບພວກເຂົາ ລູກຫລານ ອິສຣາເອນຕັ້ງຄ້າຍຕໍ່ໜ້າພວກເຂົາເໝືອນຢ່າງແບ້
ສອງຝູງນ້ອຍໆ ແຕ່ຄົນຊີເຣຍເຕັມຢູ່ທົ່ງພຽງໄປຫມົດ 28ແລະຄົນຂອງພຣະເຈົ້າຄົນໜຶ່ງໄດ້ເຂົ້າ
ໄປເຝົ້າແລະທູນກະສັດແຫ່ງອິສຣາເອນວ່າ “ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເພາະຄົນຊີເຣຍໄດ້
ກ່າວວ່າ ‘ພຣະຜູ້ເປັນເຈົ້າເປັນພຣະເຈົ້າແຫ່ງພູເຂົາ ພຣະອົງບໍ່ໄດ້ເປັນພຣະເຈົ້າແຫ່ງທົ່ງພຽງ’
ເພາະສະນັ້ນ ເຮົາຈະມອບປະຊາຊົນໝູ່ໃຫຍ່ນີ້ໄວ້ໃນມືຂອງເຈົ້າ ແລະເຈົ້າຈະໄດ້ຮູ້ວ່າເຮົາຄື
ພຣະຜູ້ເປັນເຈົ້າ.”

29ແລ້ວພວກເຂົາກໍຕັ້ງຄ້າຍກົງກັນຂ້າມກັນຢູ່ເຈັດມື້ແລ້ວໃນມື້ທີເຈັດກໍເລີ່ມຕໍ່ສູ້ກັນ ລູກຫລານ
ອິສຣາເອນ ໄດ້ຂ້າຄົນຊີເຣຍຊຶ່ງເປັນທະຫານພື້ນດິນໜຶ່ງແສນຄົນໃນມື້ດຽວ 30ແລະຄົນທີ່ເຫລືອ
ຢູ່ນັ້ນກໍປົບໜີເຂົ້າໄປໃນເມືອງອາເຟັກ ແລະກຳແພງເມືອງໄດ້ລົ້ມທັບຄົນທີ່ເຫລືອຢູ່ນັ້ນສອງ
ໝື່ນເຈັດພັນຄົນ ເບັນຮາດັດກໍໜີໄປດ້ວຍ ແລະເຂົ້າໄປໃນຫ້ອງຊັ້ນໃນທີ່ຢູ່ໃນເມືອງ 31ແລະຂ້າ-
ລາຊະການຂອງພະອົງມາທູນວ່າ “ເບິ່ງແມ ເຮົາໄດ້ຍິນຂ່າວວ່າກະສັດແຫ່ງຄອບຄົວອິສຣາເອນ
ເປັນກະສັດທີ່ມີຄວາມເມດຕາຂໍໃຫ້ເຮົາເອົາຜ້າກະສອບຄາດແອວ ແລະເອົາເຊືອກພັນຫົວຂອງ
ເຮົາ ແລະອອກໄປຫາກະສັດແຫ່ງອິສຣາເອນ ຫວັງວ່າເພິ່ນຈະໄວ້ຊີວິດຂອງພະອົງ” 32ເພາະ-
ສະນັ້ນ ພວກເຂົາຈຶ່ງເອົາຜ້າກະສອບຄາດແອວແລະເອົາເຊືອກພັນຫົວ ແລະພວກເຂົາໄປເຝົ້າ
ກະສັດ ແຫ່ງອິສຣາເອນທູນວ່າ “ເບັນຮາດັດຜູ້ຮັບໃຊ້ຂອງທ່ານສັ່ງມາວ່າ ‘ຂໍໄດ້ໂຜດເມດຕາ
ເຖີດ ຂໍໃຫ້ຂ້າພະເຈົ້າມີຊີວິດຢູ່’” ແລະພະອົງກ່າວວ່າ “ເພິ່ນຍັງມີຊີວິດຢູ່ບໍ ເພິ່ນເປັນນ້ອງຂອງ
ເຮົາ” 33ຝ່າຍຄົນເຫລົ່ານັ້ນກຳລັງຫາຊ່ອງທາງຢູ່ແລ້ວ ພວກເຂົາກໍຮີບຕອບໂດຍໄວວ່າ ‘ທ່ານ
ເອີຍເບັນຮາດັດນ້ອງຊາຍ ຂອງທ່ານ” ແລ້ວພະອົງກ່າວວ່າ “ໄປສາ ແລະນຳເພິ່ນມາ” ແລ້ວ
ເບັນຮາດັດກໍອອກມາຫາອາຣາບ ແລ້ວພະອົງກໍໃຫ້ເບັນຮາດັດຂຶ້ນໄປເທິງລົດຮົບ 34ແລະ
ເບັນຮາດັດທູນວ່າ “ຫົວເມືອງຊຶ່ງພໍ່ຂອງຂ້າພະເຈົ້າຍຶດເອົາໄປຈາກພໍ່ຂອງທ່ານນັ້ນ ຂ້າພະເຈົ້າຂໍ

ຄືນໃຫ້ ທ່ານ, ທ່ານຈະສ້າງຖະໜົນຫົນທາງຂອງທ່ານໃນເມືອງດາມາເຊກໍໄດ້ ເໝືອນກັບທີ່ພໍ່
ຂ້າພະເຈົ້າເຮັດໄວ້ໃນຊາມາເຣຍ" ແລ້ວອາຮາບກ່າວວ່າ "ເຮົາຈະຍອມໃຫ້ທ່ານໄປຕາມຄໍາໝັ້ນ-
ສັນຍານີ້" ອາຮາບຈຶ່ງເຮັດຄໍາໝັ້ນສັນຍາກັບເບັນຮາດັດ ແລະປ່ອຍເພິ່ນໄປ.

## ອາຮາບໄວ້ຊີວິດຂອງເບັນຮາດັດ

35ມີຊາຍຄົນໜຶ່ງໃນພວກລູກສິດຂອງຜູ້ທໍານວາຍເວົ້າກັບເພື່ອນຂອງຕົນຕາມພຣະບັນຊາຂອງ
ພຣະຜູ້ເປັນເຈົ້າວ່າ "ໄດ້ໂຜດເຖີດ ຂໍຕີຂ້ອຍສາ" ແຕ່ຊາຍຄົນນັ້ນກໍປະຕິເສດບໍ່ຍອມຕີເພິ່ນ
36ແລ້ວເພິ່ນຈຶ່ງເວົ້າກັບຄົນນັ້ນວ່າ "ເພາະທ່ານບໍ່ເຊື່ອຟັງພຣະສຸລະສຽງຂອງພຣະຜູ້ເປັນເຈົ້າ
ເບິ່ງແມ ເມື່ອທ່ານອອກໄປຈາກຂ້າພະເຈົ້າ ສິງໃຫຍ່ໂຕໜຶ່ງຈະຂ້າທ່ານ" ເມື່ອລາວຈາກເພິ່ນໄປ
ສິງໃຫຍ່ໂຕໜຶ່ງກໍມາພົບລາວແລະຂ້າລາວ 37ແລ້ວເພິ່ນໄປພົບຊາຍອີກຄົນໜຶ່ງ ແລະກ່າວວ່າ
"ໄດ້ໂຜດເຖີດ ຂໍຕີຂ້ອຍສາ" ຊາຍຄົນນັ້ນໄດ້ຕີເພິ່ນ ແລະ ເຮັດໃຫ້ເພິ່ນບາດເຈັບ 38ຜູ້ທໍານວາຍ
ຜູ້ນັ້ນຈຶ່ງຈາກໄປ ແລະໄປລໍຖ້າພົບກະສັດຢູ່ທີ່ຫົນທາງ ເພິ່ນໄດ້ປອມຕົວ ແລະເອົາແພປົກໜ້າໄວ້
39ເມື່ອກະສັດຜ່ານໄປ ເພິ່ນກໍຮ້ອງທູນກະສັດວ່າ "ຜູ້ຮັບໃຊ້ຂອງທ່ານເຂົ້າໄປໃນກາງເສິກ ແລະ
ເບິ່ງແມ ທະຫານ ຄົນໜຶ່ງກັບມາ ແລະນໍາຊາຍຄົນໜຶ່ງມາໃຫ້ຂ້ານ້ອຍບອກວ່າ 'ຈົ່ງຮັກສາຊາຍ
ຄົນນີ້ໄວ້ ຖ້າລາວຫລຸດໄປໄດ້ ດ້ວຍເຫດໃດກໍຕາມ ຊີວິດຂອງເຈົ້າຈະຕ້ອງແທນຊີວິດຂອງລາວ
ຫລືບໍ່ດັ່ງນັ້ນ ເຈົ້າຈະຕ້ອງເສຍເງິນໜຶ່ງຕະລັນຕົນເປັນການໄຖ່ມັນ'" 40ແລະເມື່ອຂ້າໃຊ້ຄາວຽກຢູ່
ບ່ອນນີ້ບ່ອນນັ້ນ ຄົນຜູ້ນັ້ນກໍຫາຍໄປ ກະສັດແຫ່ງອິສຣາເອນກ່າວກັບເພິ່ນວ່າ "ໂທດຂອງເຈົ້າ
ຕ້ອງເປັນຢ່າງນັ້ນແຫລະ ເພາະເຈົ້າເອງໄດ້ຕັດສິນແລ້ວ" 41ແລ້ວເພິ່ນກໍຮີບເອົາຜ້າປົກໜ້າອອກ
ຈາກໜ້າຂອງຕົນ ແລະກະສັດແຫ່ງອິສຣາເອນກໍຈື່ໄດ້ວ່າເປັນຜູ້ທໍານວາຍຄົນໜຶ່ງ 42ແລະຜູ້ທໍາ-
ນວາຍຈຶ່ງທູນພະອົງວ່າ "ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເພາະເຈົ້າໄດ້ປ່ອຍຊາຍຄົນທີ່ຢູ່ໃນມື
ຂອງເຈົ້າ ຜູ້ຊຶ່ງເຮົາໄດ້ກໍານົດໃຫ້ທໍາລາຍນັ້ນ ຊີວິດຂອງເຈົ້າຈະຕ້ອງແທນຊີວິດຂອງລາວ ແລະ
ຊົນຊາດຂອງເຈົ້າແທນຊົນຊາດຂອງລາວ" 43ກະສັດແຫ່ງອິສຣາເອນກໍສະເດັດເຂົ້າໄປໃນພະ-
ລາຊະວັງດ້ວຍຄວາມເສົ້າໝອງ ແລະບໍ່ພໍໃຈຫລາຍ ຈຶ່ງສະເດັດໄປໃນເມືອງຊາມາເຣຍ.

# ບົດທີ 21

## ນາໂບດຖືກຂ້າຍ້ອນສວນອະງຸ່ນ

1ນາໂບດຊາວເຢດຊະເຣເອນມີສວນອະງຸ່ນຢູ່ຕອນໜຶ່ງ ໃກ້ກັບພະລາຊະວັງຂອງເຈົ້າອາ-
ຮາບ. 2ມື້ໜຶ່ງເຈົ້າອາຮາບເວົ້າຕໍ່ນາໂບດວ່າ, "ສວນອະງຸ່ນຂອງເຈົ້ານີ້ໃຫ້ຂ້ອຍເຮັດສວນຜັກເສຍ
ເພາະມັນຕິດກັບເຮືອນຂອງຂ້ອຍ ຂ້ອຍຈະເອົາສວນອະງຸ່ນດີກວ່ານີ້ໃຫ້ແກ່ເຈົ້າດອກ ຫລືຖ້າເຈົ້າ
ບໍ່ມັກແບບນີ້ໃຫ້ຂ້ອຍຊື້ເອົາກໍໄດ້." 3ນາໂບດຈຶ່ງທູນຕອບວ່າ, "ສວນນີ້ເປັນມູນມໍລະດົກມາຈາກປູ່
ຍ່າຕາຍາຍຂອງຂ້ານ້ອຍ ຂໍພຣະຜູ້ເປັນເຈົ້າຊົງຊ່ອຍຢ່າໃຫ້ຂ້ານ້ອຍໄດ້ເຮັດຜິດໂດຍຂາຍສວນນີ້
ເສຍ."

4ອາຮາບສະເດັດກັບຄືນເມືອພະລາຊະວັງ ດ້ວຍໝົດຄວາມຫວັງ ແລະອາລົມເສຍຍ້ອນຄໍາ
ເວົ້າຂອງນາໂບດພະອົງຊົງບັນທົມປິ່ນໜ້າເຂົ້າຝາ ແລະບໍ່ຍອມສະເຫວີຍອາຫານ. 5ພະນາງເຢ-

ເຊເບນ ມະເຫສີຂອງພະອົງຈຶ່ງມາຖາມວ່າ, "ເປັນຫຍັງສະເດັດອ້າຍຈຶ່ງຫງ່ອມເຫງົາຈົນບໍ່ກິນ
ເຂົ້າ?" [6]ພະອົງຈຶ່ງຕອບວ່າ, "ອ້າຍໄດ້ເວົ້າກັບ ນາໂບດ ຊາວ ເຢດຊະເຣເອນ ໃຫ້ຍົກສວນອະງຸ່ນ
ຂອງລາວໃຫ້ແກ່ອ້າຍ ໂດຍທີ່ອ້າຍຈະເອົາເງິນ ຫລືສວນອະງຸ່ນໃໝ່ປ່ຽນກັບລາວ ຕາມທີ່ລາວພໍ-
ໃຈ ແຕ່ລາວບໍ່ຍອມໃຫ້ເລີຍ." [7]ເຢເຊເບນຈຶ່ງເວົ້າຕໍ່ພະລາຊາວ່າ, "ສະເດັດອ້າຍຊົງເປັນເຈົ້າຊີ-
ວິດ ອິສຣາເອນ ແມ່ນບໍ? ຈົ່ງລຸກຂຶ້ນສາ ຈົ່ງທຳໃຈໃຫ້ສະບາຍ ແລະສະເຫວີຍອາຫານເສຍ
ນ້ອງຈະເອົາສວນອະງຸ່ນຂອງ ນາໂບດ ຊາວ ເຢດຊະເຣເອນມາໃຫ້ເປັນຂອງອ້າຍເອງ."

[8]ດັ່ງນັ້ນ ນາງຈຶ່ງຂຽນໜັງສືປະທັບຕາໃນນາມພະລາຊະສາມີ ແລ້ວສົ່ງໜັງສືນີ້ໄປຫາເຈົ້ານາຍ
ພ້ອມທັງເຖົ້າແກ່ໃນເມືອງ ເຢດຊະເຣເອນ. [9]ໃນຈົດໝາຍນັ້ນພະນາງຂຽນວ່າ, "ຈົ່ງປະກາດໃຫ້
ທຸກຄົນຊຸມນຸມ ແລະຖືສິນອົດອາຫານ ແລ້ວໃຫ້ນາໂບດນັ່ງຢູ່ບ່ອນທີ່ມີກຽດ. [10]ແລະເອົານັກເລງ
ສອງຄົນມາຢືນຢູ່ຕໍ່ໜ້າລາວ ແລະໃຫ້ພວກເຂົາກ່າວໂທດໃສ່ລາວວ່າ ລາວໄດ້ປ້ອຍດ່າພຣະເຈົ້າ
ແລະເຈົ້າຊີວິດ ແລ້ວໃຫ້ເອົາລາວອອກມານອກເມືອງແລະແກວ່ງກ້ອນຫີນໃສ່ໃຫ້ຕາຍ."

[11]ບັນດາເຈົ້ານາຍພ້ອມທັງເຖົ້າແກ່ທີ່ຢູ່ໃນເມືອງດຽວກັນກັບ ນາໂບດ ກໍປະຕິບັດຕາມຄຳສັ່ງ
ຂອງພະນາງ ເຢເຊເບນ ຕາມທີ່ເພິ່ນໄດ້ຂຽນລົງໃນຈົດໝາຍທີ່ສົ່ງໄປໃຫ້ພວກເຂົານັ້ນ. [12]ພວກ
ເຂົາກໍປະກາດໃຫ້ຖືສິນອົດອາຫານ ແລະເອີ້ນປະຊາຊົນມາເຕົ້າໂຮມກັນ ແລະໃຫ້ນາໂບດໄປນັ່ງ
ຢູ່ບ່ອນທີ່ມີກຽດ ແລ້ວນັກເລງສອງຄົນກໍມາຢືນຢູ່ຕໍ່ໜ້າລາວ. [13]ແລ້ວກ່າວໂທດວ່າ ລາວປ້ອຍດ່າ
ພຣະເຈົ້າ ແລະເຈົ້າຊີວິດ ດັ່ງນັ້ນ ພວກເຂົາຈຶ່ງນຳລາວອອກໄປນອກເມືອງແລະແກວ່ງກ້ອນຫີນ
ໃສ່ຈົນຕາຍ. [14]ຕໍ່ມາ ພວກເຂົາກໍສົ່ງຂ່າວໄປບອກພະນາງ ເຢເຊເບນ ວ່າ, "ນາໂບດ ໄດ້ຖືກ
ແກວ່ງກ້ອນຫີນໃສ່ຈົນຕາຍແລ້ວ."

[15]ເມື່ອ ເຢເຊເບນ ໄດ້ຮູ້ວ່າ ນາໂບດຕາຍແລ້ວ ພະນາງຈຶ່ງທູນ ອາຮາບ ວ່າ, "ນາໂບດໄດ້ຕາຍ
ແລ້ວ ຂໍສະເດັດອ້າຍຈົ່ງໄປຍຶດເອົາສວນອະງຸ່ນທີ່ ນາໂບດ ບໍ່ຍອມໃຫ້ນັ້ນມາເປັນກຳມະສິດສາ.
[16]ເມື່ອ ອາຮາບ ຮູ້ຂ່າວດັ່ງນັ້ນ ພະອົງກໍສະເດັດລົງໄປຍຶດເອົາສວນອະງຸ່ນມາເປັນກຳມະສິດຂອງ
ຕົນ.

## ພຣະເຈົ້າຊົງສາບແຊ່ງອາຮາບ

[17-18]ແລ້ວພຣະຜູ້ເປັນເຈົ້າຊົງກ່າວຕໍ່ ເອລີຢາ ຊາວ ຕິຊະເບ ວ່າ, "ຈົ່ງຟ້າວໄປພົບ ອາຮາບ ເຈົ້າ
ຊີວິດ ອິສຣາເອນທີ່ກຸງຊາມາເຣຍ ເຈົ້າຈະພົບລາວໃນສວນອະງຸ່ນຂອງ ນາໂບດ ເພາະລາວໄດ້
ໄປຍຶດເອົາສວນນັ້ນມາເປັນກຳມະສິດແລ້ວ. [19]ເຈົ້າຈົ່ງເວົ້າກັບລາວດັ່ງນີ້ວ່າ, "ພຣະຜູ້ເປັນເຈົ້າ
ຊົງກ່າວວ່າ ເຈົ້າໄດ້ຂ້າເຈົ້າຂອງສວນນີ້ ແລະຍຶດເອົາສວນມາເປັນກຳມະສິດຂອງເຈົ້າ ສະນັ້ນ
ໃນບ່ອນທີ່ໝາໄດ້ເລຍເລືອດຂອງ ນາໂບດ ໝາກໍຈະເລຍເລືອດຂອງເຈົ້າເໝືອນກັນ."

[20]ເມື່ອ ອາຮາບ ເຫັນ ເອລີຢາ ພະອົງຈຶ່ງກ່າວຂຶ້ນວ່າ, "ເອລີຢາຜູ້ເປັນສັດຕູຂອງຂ້ອຍ ບັດນີ້
ເຈົ້າໄດ້ພົບຂ້ອຍແລ້ວ" ເອລີຢາຈຶ່ງຕອບວ່າ, "ແມ່ນແລ້ວ ພະອົງໄດ້ຍອມຂາຍຕົວເຮັດໃນສິ່ງທີ່
ຜິດ ຕໍ່ສາຍພຣະເນດຂອງພຣະຜູ້ເປັນເຈົ້າ. [21]ພຣະຜູ້ເປັນເຈົ້າຊົງກ່າວໄວ້ວ່າ, "ເຮົາຈະນຳໄຊກ
ຮ້າຍມາສູ່ເຈົ້າ ແລະຈະກວາດເອົາເຊື້ອສາຍຂອງເຈົ້າໃຫ້ໝົດໄປ ຄືກຳຈັດຜູ້ຊາຍທຸກຄົນທີ່ຢູ່ໃນ
ເຊື້ອສາຍຂອງເຈົ້າ ທັງຜູ້ໜຸ່ມ ແລະຜູ້ເຖົ້າ. [22]ເຮົາຈະເຮັດໃຫ້ເຊື້ອສາຍຂອງເຈົ້າເປັນເໝືອນ

ເຊື້ອສາຍຂອງກະສັດ ເຢໂຣໂບອາມ ລູກຊາຍຂອງ ເນບັດ ແລະເໝືອນເຊື້ອສາຍຂອງເຈົ້າບາ-
ອາຊາ ລູກຊາຍຂອງ ອາຮີຢາ ເພາະເຈົ້າໄດ້ເຮັດໃຫ້ເຮົາໃຈຮ້າຍ ແລະໄດ້ພາໃຫ້ພວກອິສຣາ-
ເອນ ເຮັດຜິດ. 23ແລະ ພຣະຜູ້ເປັນເຈົ້າ ຍັງຊົງກ່າວກ່ຽວກັບພະນາງ ເຢເຊເບນ ວ່າ ຝູງໝາຈະ
ກັດກິນພະນາງ ເຢເຊເບນ ຢູ່ໃນເມືອງ ເຢດຊະເຣເອນ. 24ຝູງໝາຈະກັດກິນຍາດຕິພີ່ນ້ອງຂອງ
ອາຮາບ ທີ່ຕາຍຢູ່ໃນເມືອງ ແລະຝູງແຮ້ງຈະສັບຕອດກິນຜູ້ທີ່ຕາຍໃນທົ່ງນາ.” 25ບໍ່ເຄີຍມີຜູ້ໃດທີ່
ຂາຍຕົວເອງ ເພື່ອສ້າງຄວາມຜິດຕໍ່ສາຍພຣະເນດຂອງ ພຣະຜູ້ເປັນເຈົ້າ ດັ່ງ ອາຮາບ ທີ່ຖືກຍຸ
ແຫຍ່ຈາກພະນາງ ເຢເຊເບນ ຜູ້ເປັນມະເຫສີ. 26ພະອົງໄດ້ເຮັດໃນສິ່ງທີ່ໜ້າກຽດໜ້າຊັງທີ່ສຸດ
ໂດຍໄດ້ຂາບໄຫວ້ຮູບພະດັ່ງຊາວ ອະໂມຣິດ ຊຶ່ງເປັນພວກທີ່ ພຣະຜູ້ເປັນເຈົ້າ ໄດ້ໄລ່ອອກຈາກ
ພວກ ອິສຣາເອນ.

27ເມື່ອ ອາຮາບ ໄດ້ຍິນຖ້ອຍຄຳຈາກ ເອລີຢາ ພະອົງໄດ້ຈີກເສື້ອຜ້າສະແດງຄວາມໂສກເສົ້າ
ແລະຖືສິນອົດອາຫານ ພະອົງນອນໃນຊຸດໄວ້ທຸກ ແລະໄປມາດ້ວຍອາການເປັນທຸກໃນພະໄທທີ່
ສຸດ. 28-29ແລ້ວ ພຣະຜູ້ເປັນເຈົ້າ ຊົງກ່າວຕໍ່ ເອລີຢາວ່າ, “ເຈົ້າເຫັນບໍ່ວ່າ ອາຮາບ ໄດ້ຖ່ອມຕົວລົງ
ຕໍ່ໜ້າເຮົາຢ່າງໃດ? ຍ້ອນວ່າລາວໄດ້ຖ່ອມຕົວລົງດັ່ງນີ້ແຫລະ ເຮົາຈະບໍ່ນຳເອົາເຫດ ຮ້າຍມາສູ່
ເຊື້ອສາຍຂອງລາວ ໃນເວລາລູກຊາຍໄດ້ປົກຄອງ.”

# ບົດທີ 22

## ມີກາຢາ ທຳນວາຍເຖິງການເສຍໄຊຂອງອາຮາບ

1-2ຊີເຣຍ ແລະ ອິສຣາເອນບໍ່ໄດ້ສ້າງສົງຄາມຕໍ່ກັນເປັນເວລາສາມປີ ເມື່ອຮອດປີທີສາມ ເຢ-
ໂຮຊາຟັດ ເຈົ້າຊີວິດແຫ່ງປະເທດຢູດາ ກໍສະເດັດມາຢ້ຽມຢາມ ອາຮາບ ເຈົ້າຊີວິດແຫ່ງປະເທດ
ອິສຣາເອນ. 3ເຈົ້າ ອາຮາບ ຈຶ່ງຖາມຂ້າລາຊະການຂອງພະອົງວ່າ, “ພວກທ່ານຮູ້ບໍວ່າ ເມືອງ ຣາ-
ໂມດ ກີເລອາດ ເປັນຂອງພວກເຮົາ ແຕ່ເປັນຫຍັງພວກເຮົາຈຶ່ງຢູ່ຊື່ໆ ບໍ່ໄປເອົາອອກຈາກເຈົ້າຊີ-
ວິດ ຊີເຣຍ.” 4-5ພະອົງກ່າວຕໍ່ ເຢໂຮຊາຟັດ ວ່າ, “ທ່ານຈະໄປຕີເອົາເມືອງ ຣາໂມດ ກີເລອາດ
ຮ່ວມນຳຂ້າພະເຈົ້າບໍ? ເຢໂຮຊາຟັດ ຈຶ່ງຕອບວ່າ, “ຂ້າພະເຈົ້າຕຽມພ້ອມຢູ່ແລ້ວ ດັ່ງດຽວກັບທ່ານ
ທະຫານຂອງຂ້າພະເຈົ້າກໍຄືທະຫານຂອງທ່ານ ມ້າຂອງຂ້າພະເຈົ້າກໍຄືມ້າຂອງທ່ານ ແຕ່ຂໍໃຫ້
ປຶກສາເລື່ອງນີ້ກັບ ພຣະຜູ້ເປັນເຈົ້າ ເສຍກ່ອນ.” 6ດັ່ງນັ້ນ ເຈົ້າ ອາຮາບ ຈຶ່ງ ເອີ້ນພວກຜູ້ປະກາດ
ພຣະຄຳມາປະຊຸມ ຊຶ່ງມີປະມານສີ່ຮ້ອຍຄົນ ພະອົງຖາມວ່າ, “ຂ້າພະເຈົ້າຄວນຈະອອກໄປຕໍ່ສູ້
ກັບຊາວເມືອງ ຣາໂມດ ກີເລອາດບໍ ຫລືບໍ່ຄວນໄປ?”ພວກເຂົາຈຶ່ງທູນຕອບວ່າ, “ຂໍພະອົງຊົງສະ-
ເດັດໄປເທີ້ນ ເພາະ ພຣະຜູ້ເປັນເຈົ້າ ຊົງມອບເມືອງນີ້ໄວ້ໃນອຳນາດຂອງພະອົງແລ້ວ.” 7ແຕ່ ເຢ-
ໂຮຊາຟັດ ຖາມວ່າ, “ຢູ່ບ່ອນນີ້ບໍ່ມີຜູ້ປະກາດພຣະຄຳຂອງ ພຣະຜູ້ເປັນເຈົ້າ ຄົນອື່ນອີກບໍ? ທີ່ພວກ
ເຮົາຄວນປຶກສາຫາລືນຳ.” 8ເຈົ້າຊີວິດແຫ່ງ ອິສຣາເອນ ຈຶ່ງຕອບ ເຢໂຮຊາຟັດ ວ່າ, “ຍັງມີຢູ່ ລາວ
ຊື່ວ່າ ມີກາຢາ ລູກຊາຍຂອງ ອິມລາ ແຕ່ຂ້າພະເຈົ້າຊັງລາວ ເພາະລາວບໍ່ເຄີຍທຳນວາຍເລື່ອງ
ດີກ່ຽວກັບຂ້າພະເຈົ້າເລີຍ ລາວມີແຕ່ທຳນວາຍເລື່ອງບໍ່ດີໃຫ້ເລື້ອຍໆ.” ແຕ່ ເຢໂຮຊາຟັດ ເວົ້າວ່າ,
“ພະລາຊາບໍ່ຄວນເວົ້າດັ່ງນີ້.” 9ດັ່ງນັ້ນ ເຈົ້າ ອາຮາບ ຈຶ່ງຊົງຮັບສັ່ງຂ້າລາຊະການຄົນໜຶ່ງວ່າ, “ຈົ່ງ

ໄປນຳຕົວ ມີກາຢາມາໄວໆ.”
[10]ເຈົ້າອາຮາບ ແລະເຢໂຮຊາຟັດ ເຈົ້າຊີວິດແຫ່ງປະເທດຢູດາໄດ້ຊົງເຄື່ອງພະລາຊາແລ້ວ
ປະທັບຢູ່ທີ່ລານຟາດເຂົ້າ ຢູ່ທາງນອກປະຕູເມືອງຊາມາເຣຍ. [11]ຊຶ່ງມີພວກຜູ້ປະກາດພຣະທຳທັງ
ໝົດຖວາຍຄຳທຳນວາຍຢູ່ ແຕ່ແລ້ວມີຜູ້ປະກາດພຣະຄຳຜູ້ໜຶ່ງຊື່ວ່າເຊເດກີຢາ ລູກຊາຍຂອງ
ເຄນາອານາ ໄດ້ເອົາເຫລັກມາເຮັດເປັນເຂົາສຸບໃສ່ຫົວ ແລະທູນຕໍ່ເຈົ້າອາຮາບວ່າ, “ພຣະຜູ້-
ເປັນເຈົ້າຊົງກ່າວດັ່ງນີ້ ພະອົງຈະໄລ່ຄົນຊີເຣຍໄປຈົນພວກເຂົາຖືກທຳລາຍໝົດ.” [12]ແລະພວກຜູ້
ປະກາດພຣະຄຳທຸກຄົນກໍທຳນວາຍຢ່າງດຽວກັນວ່າ, “ຂໍພະອົງຊົງສະເດັດໄປຕໍ່ສູ້ທີ່ເມືອງ ຣາ-
ໂມດກີເລອາດ ແລ້ວພະອົງຈະຊະນະ ເພາະວ່າພຣະຜູ້ເປັນເຈົ້າຊົງມອບເມືອງນີ້ໄວ້ໃນອຳນາດ
ຂອງພະອົງແລ້ວ.” [13]ຜູ້ທີ່ໄປນຳຕົວມີກາຢາມານັ້ນ ໄດ້ເວົ້າຕໍ່ມີກາຢາວ່າ, “ພວກຜູ້ປະກາດ
ພຣະຄຳທຸກຄົນຕ່າງກໍທຳນວາຍແຕ່ເລື່ອງດີແກ່ພະລາຊາ ດັ່ງນັ້ນ ຂໍທ່ານຈົ່ງເວົ້າດັ່ງດຽວກັບ
ພວກເຂົາ ແລະທຳນວາຍແຕ່ເລື່ອງດີແກ່ພະອົງ.” [14]ແຕ່ມີກາຢາຕອບວ່າ, “ໃນພຣະນາມຂອງ
ພຣະຜູ້ເປັນເຈົ້າທີ່ຊົງພຣະຊົນຢູ່ ຂ້າພະເຈົ້າຈະເວົ້າຕາມທີ່ພຣະອົງຊົງກ່າວໄວ້ກັບຂ້າພະເຈົ້າເທົ່າ
ນັ້ນ.”
[15]ເມື່ອມີກາຢາເຂົ້າເຝົ້າເຈົ້າຊີວິດ ພະອົງຈຶ່ງຖາມວ່າ, “ມີກາຢາ ພວກເຮົາຄວນຈະອອກໄປ
ຕໍ່ສູ້ກັບຊາວເມືອງ ຣາໂມດກີເລອາດຫລືບໍ່?” ລາວຈຶ່ງທູນຕອບວ່າ, “ຄວນສະເດັດອອກໄປ
ແລ້ວພະອົງຈະຊະນະເພາະວ່າພຣະຜູ້ເປັນເຈົ້າຊົງມອບເມືອງນີ້ໄວ້ໃຕ້ອຳນາດຂອງພະອົງແລ້ວ.”
[16]ແຕ່ເຈົ້າຊີວິດກ່າວວ່າ, “ຂ້ອຍໄດ້ບອກເຈົ້າຫລາຍເທື່ອແລ້ວວ່າ ໃຫ້ເວົ້າແຕ່ຄວາມຈິງເທົ່ານັ້ນ
ໃນພຣະນາມຂອງພຣະຜູ້ເປັນເຈົ້າ.” [17]ແລ້ວມີກາຢາ ກໍທູນວ່າ, “ຂ້ານ້ອຍໄດ້ເຫັນປະຊາຊົນອິ-
ສຣາເອນແຕກກະຈັດກະຈາຍຢູ່ຕາມພູນ້ອຍ ເໝືອນດັ່ງຝູງແກະທີ່ບໍ່ມີຜູ້ລ້ຽງ ແລະພຣະຜູ້ເປັນ-
ເຈົ້າຊົງກ່າວວ່າ, ‘ປະຊາຊົນເຫລົ່ານີ້ບໍ່ມີຜູ້ນຳ ຂໍໃຫ້ພວກເຂົາກັບຄືນເມືອບ້ານເມືອເຮືອນຂອງ
ພວກເຂົາດ້ວຍຄວາມສະຫງົບສຸກເທີ້ນ.’” [18]ເຈົ້າອາຮາບຈຶ່ງເວົ້າກັບ ເຢໂຮຊາຟັດວ່າ, “ຂ້າພະ-
ເຈົ້າໄດ້ບອກທ່ານແລ້ວບໍ່ແມ່ນບໍວ່າ ລາວບໍ່ເຄີຍທຳນວາຍເລື່ອງດີກ່ຽວກັບຂ້າພະເຈົ້າຈັກເທື່ອເລີຍ
ລາວມີແຕ່ທຳນວາຍເລື່ອງຮ້າຍເທົ່ານັ້ນ? [19]ມີກາຢາທູນຕໍ່ໄປວ່າ, “ຂໍພະອົງຮັບຟັງພຣະຄຳຂອງ
ພຣະຜູ້ເປັນເຈົ້າ ຂ້ານ້ອຍໄດ້ເຫັນພຣະຜູ້ເປັນເຈົ້າປະທັບເທິງພະທີ່ນັ່ງຂອງພຣະອົງໃນສະຫວັນ
ຊັ້ນຟ້າ ແລະພວກບໍລິວານແຫ່ງເມືອງສະຫວັນໄດ້ຢືນຢູ່ທາງຂ້າງຂວາ ແລະທາງຂ້າງຊ້າຍຂອງ
ພຣະອົງ. [20]ພຣະຜູ້ເປັນເຈົ້າຊົງຖາມວ່າ, “ແມ່ນໃຜຈະໄປລໍ້ລວງອາຮາບ ໃຫ້ອອກໄປຕາຍທີ່
ເມືອງ ຣາໂມດກີເລອາດ.” [21]ພວກເທວະດາບາງພວກກໍທູນຢ່າງນັ້ນ ລາງພວກກໍທູນຢ່າງນີ້
ແລ້ວກໍມີວິນຍານດວງໜຶ່ງມາຢູ່ ຕໍ່ພຣະພັກພຣະຜູ້ເປັນເຈົ້າ ແລະທູນວ່າ, “ຂ້ານ້ອຍຈະເປັນຜູ້ລໍ້
ລວງລາວ.” [22]ພຣະຜູ້ເປັນເຈົ້າຊົງຖາມວ່າ, “ຈະເຮັດຢ່າງໃດ?” ວິນຍານດວງນັ້ນຈຶ່ງທູນຕອບ
ວ່າ, “ຂ້ານ້ອຍຈະໄປເຮັດໃຫ້ພວກຜູ້ປະກາດພຣະຄຳທຸກຄົນຂອງອາຮາບເວົ້າຕົວະ” ດັ່ງນັ້ນ
ພຣະອົງຈຶ່ງຕອບວ່າ, “ຈົ່ງໄປລໍ້ລາວ ແລ້ວເຈົ້າຈະສຳເລັດຜົນ” [23]ແລ້ວ ມີກາຢາກໍເວົ້າສະຫລຸບ
ວ່າ, “ເຫດການກໍເປັນມາດັ່ງນີ້ແຫລະ ພຣະຜູ້ເປັນເຈົ້າຊົງບັນດານໃຫ້ພວກຜູ້ປະກາດພຣະຄຳ
ທຸກຄົນຂອງພະອົງເວົ້າຕົວະພະອົງ ແຕ່ຄວາມຈິງແລ້ວ ພຣະຜູ້ເປັນເຈົ້າຊົງກ່າວຮ້າຍໃສ່ພະ

ອິງ.” 24ແລ້ວ ເຊເດກີຢາ ລູກຊາຍ ເຄນາອານາ ກໍລຸກຂຶ້ນມາຕົບໜ້າ ມີກາຢາ ແລະຖາມວ່າ,
“ພຣະວິນຍານ ຂອງ ພຣະຜູ້ເປັນເຈົ້າ ທີ່ຢູ່ກັບຂ້ອຍ ຈະອອກໄປເວົ້າກັບເຈົ້າໄດ້ຢ່າງໃດ?” 25ມີ-
ກາຢາ ຈຶ່ງຕອບວ່າ, “ໃນເວລາທີ່ເຈົ້າໄດ້ໜີໄປລີ້ຢູ່ບ່ອນລັບລີ້ພຸ້ນແຫລະ ເຈົ້າຈຶ່ງຈະຮູ້ວ່າມັນເປັນ
ຢ່າງໃດ?” 26ເຈົ້າ ອາຮາບ ຈຶ່ງສັ່ງໃຫ້ນາຍທະຫານຜູ້ໜຶ່ງ ຈັບ ມີກາຢາ ໄປມອບໃຫ້ ອາໂມນ ຜູ້
ປົກຄອງເມືອງຄືເຈົ້າຊາຍ ໂຢອາດ. 27ແລະບອກພວກເພິ່ນວ່າ, “ນີ້ເປັນຄຳສັ່ງຂອງພະລາຊາ ຈົ່ງ
ເອົາຊາຍຄົນນີ້ໄປຂັງຄຸກໄວ້ຈົນເທົ່າຂ້ອຍກັບມາຢ່າງປອດໄພ ໃຫ້ເອົາແຕ່ເຂົ້າຈີ່ກັບນໍ້າໃຫ້ລາວ
ກິນ.” 28ມີກາຢາ ຈຶ່ງທູນວ່າ, “ຖ້າພະອົງໄດ້ສະເດັດກັບຄືນມາຢ່າງປອດໄພກໍໝາຍຄວາມວ່າ
ພຣະຜູ້ເປັນເຈົ້າບໍ່ໄດ້ຊົງເວົ້າກັບຂ້ານ້ອຍ” ແລະລາວໄດ້ເວົ້າຢໍ້າອີກວ່າ “ຂໍໃຫ້ທຸກຄົນຈົ່ງຮັບຟັງ
ໃນຄຳທີ່ຂ້າພະເຈົ້າໄດ້ເວົ້າ.”

## ອາຮາບເສຍຊີວິດ

29ອາຮາບ ເຈົ້າຊີວິດແຫ່ງປະເທດອິສຣາເອນ ແລະ ເຢໂຮຊາຟັດ ເຈົ້າຊີວິດແຫ່ງປະເທດຢູດາ
ໄດ້ຍົກທັບໄປຕໍ່ສູ້ຊາວເມືອງ ຣາໂມດກີເລອາດ. 30ເຈົ້າ ອາຮາບ ເວົ້າຕໍ່ ເຢໂຮຊາຟັດ ວ່າ, “ຂ້າ-
ພະເຈົ້າຈະປອມຕົວໄປໃນສະໜາມຮົບ ແຕ່ຂ້າພະເຈົ້າຕ້ອງການໃຫ້ທ່ານນຸ່ງເຄື່ອງແບບຂອງກະ-
ສັດເຂົ້າໄປ ແລ້ວເຈົ້າ ອາຮາບ ກໍປອມຕົວເຂົ້າສູ່ສະໜາມຮົບ. 31ຝ່າຍເຈົ້າຊີວິດແຫ່ງປະເທດຊີ-
ເຣຍ ກໍອອກຄຳສັ່ງແກ່ຜູ້ບັນຊາການຝ່າຍລົດຮົບສາມສິບສອງຄົນວ່າ ບໍ່ຕ້ອງຕໍ່ສູ້ໃຜໝົດ ບໍ່ວ່າ
ພົນທະຫານ ຫລືນາຍທະຫານ ແຕ່ໃຫ້ຕໍ່ສູ້ກັບເຈົ້າຊີວິດແຫ່ງ ອິສຣາເອນ ເທົ່ານັ້ນ.” 32ດັ່ງນັ້ນ
ເມື່ອຜູ້ບັນຊາການທະຫານລົດຮົບຫລຽວເຫັນ ເຢໂຮຊາຟັດ ພວກເຂົາຈຶ່ງຄິດວ່າ ເພິ່ນແມ່ນເຈົ້າຊີ-
ວິດແຫ່ງ ອິສຣາເອນ ຢ່າງແນ່ນອນ ພວກເຂົາຈຶ່ງເລັ່ງລົດເຂົ້າໄປຕໍ່ສູ້. 33ແຕ່ ເຢໂຮຊາຟັດ ໄດ້ຮ້ອງ
ຂຶ້ນ ພວກຜູ້ບັນຊາການລົດຮົບຈຶ່ງສັງເກດເຫັນວ່າ ບໍ່ແມ່ນເຈົ້າຊີວິດແຫ່ງ ອິສຣາເອນ ພວກເຂົາ
ຈຶ່ງກັບຄືນ ແລະບໍ່ຕິດຕາມເພິ່ນໄປ. 34ແຕ່ມີທະຫານຜູ້ໜຶ່ງກົ່ງທະນູຍິງຕາມອາດ ພໍດີໄປສຽບ
ເຂົ້າຊ່ອງວ່າງບ່ອນເສື້ອເຫລັກຕໍ່ກັນຂອງ ອາຮາບ ພຣະອົງຈຶ່ງກ່າວແກ່ຜູ້ຂັບລົດມ້າວ່າ, “ຈົ່ງ
ອວ່າຍລົດກັບຄືນແລະພາຂ້ອຍອອກຈາກສະໜາມຮົບນີ້ ຂ້ອຍຖືກຍິງແລ້ວ.” 35ໃນມື້ນັ້ນ ການສູ້
ຮົບໄດ້ດຸເດືອດທີ່ສຸດ ພວກເຂົາໄດ້ຊູພະອົງໃຫ້ຢືນຂຶ້ນໃນລົດມ້າຕໍ່ໜ້າຊາຍຊີເຣຍ ເລືອດຈາກ
ບາດແຜຂອງພະອົງໄດ້ໄຫລອອກເຕັມຖັງລົດຮົບ ພໍຍາມແລງມາ ພະອົງກໍສິ້ນໃຈຕາຍ. 36ເມື່ອ
ຕາເວັນຕົກດິນໄດ້ມີສຽງຮ້ອງຂຶ້ນວ່າ, “ທຸກຄົນຈົ່ງກັບຄືນເມືອບ້ານເມືອງຂອງໃຜລາວ” ແລ້ວທຸກ
ຄົນກໍໄດ້ກັບຄືນເມືອ. 37ແລ້ວເຂົາໄດ້ເອົາສົບຂອງເຈົ້າຊີວິດໄປຝັງໄວ້ທີ່ກຸງ ຊາມາເຣຍ. 38ພວກ
ເຂົາລ້າງລົດມ້າທີ່ສະນໍ້າ ຊາມາເຣຍ ຝູງໝາກໍມາເລຍເລືອດ ແລະມີຍິງໂສເພນີໄດ້ມາອາບນໍ້າຢູ່
ທີ່ນັ້ນ ຊຶ່ງເປັນໄປຕາມພຣະຄຳທີ່ ພຣະຜູ້ເປັນເຈົ້າ ໄດ້ຊົງກ່າວໄວ້ທຸກປະການ.

39ສ່ວນເລື່ອງຕ່າງໆ ຂອງ ອາຮາບ ທີ່ຍັງເຫລືອຢູ່ ຄື ການກະທຳຕ່າງໆ ຂອງພະອົງ ເຊັ່ນ
ການສ້າງພະລາຊະວັງດ້ວຍງາຊ້າງ ການສ້າງຫົວເມືອງຕ່າງໆ ໄດ້ບັນທຶກໄວ້ໃນປຶ້ມປະຫວັດ-
ສາດຂອງບັນດາເຈົ້າຊີວິດ ອິສຣາເອນ. 40ເມື່ອເຈົ້າ ອາຮາບ ໄດ້ສະຫວັນນະຄົດໄປແລ້ວ ອາຮາ-
ຊີຢາ ລາຊະໂອລົດຂອງພະອົງກໍຂຶ້ນປົກຄອງແທນ.

## ເຢໂຮຊາຟັດຂຶ້ນປົກຄອງຢູດາ[ກ]

[41]ເຢໂຮຊາຟັດ ລູກຊາຍຂອງ ອາຊາ ເລີ່ມຂຶ້ນປົກຄອງ ຢູດາ ໃນປີທີສີ່ ແຫ່ງລາຊະການ ອາຮາບ
ກະສັດ ແຫ່ງ ອິສຣາເອນ [42]ເຢໂຮຊາຟັດ ມີອາຍຸສາມສິບຫ້າປີ ເມື່ອ ເລີ່ມຂຶ້ນປົກຄອງ ແລະພະອົງ
ປົກຄອງໃນ ເຢຣູຊາເລັມ ຊາວຫ້າປີ ແມ່ຂອງພະອົງມີຊື່ວ່ານາງ ອາຊູບາ ລູກສາວຂອງ ຊິນຣີ
[43]ພະອົງໄດ້ດຳເນີນຕາມ ອາຊາ ພໍ່ຂອງຕົນທຸກປະການ ບໍ່ໄດ້ຫັນໜີໄປຈາກຮີດຄອງນັ້ນ ແຕ່ວ່າ
ໄດ້ເຮັດສິ່ງທີ່ຖືກຕ້ອງໃນສາຍພຣະເນດ ພຣະຜູ້ເປັນເຈົ້າ ແຕ່ປູຊະນີຍະສະຖານສູງນັ້ນຍັງບໍ່ໄດ້
ທຳລາຍລົງ ປະຊາຊົນຍັງຖວາຍ ເຄື່ອງສັດບູຊາ ແລະ ເຜົາເຄື່ອງຫອມຢູ່ ເທິງປູຊະນີຍະສະຖານ
ສູງນັ້ນ [44]ເຢໂຮຊາຟັດ ໄດ້ເຮັດສຳພັນທະໄມຕີກັບກະສັດແຫ່ງ ອິສຣາເອນ ດ້ວຍ.

[45]ລາຊະກິດຕ່າງໆຂອງ ເຢໂຮຊາຟັດ ແລະອຳນາດທີ່ພະອົງໄດ້ສະແດງ ແລະສົງຄາມທີ່ພະ
ອົງໄດ້ເຮັດກໍໄດ້ບັນທຶກໄວ້ໃນໜັງສືຂ່າວຄາວ ແຫ່ງກະສັດປະເທດ ຢູດາ [46]ແລະພວກຊາຍໂສເພ-
ນີທີ່ຍັງ ເຫລືອຢູ່ຄືຜູ້ທີ່ຍັງ ເຫລືອໃນສະໄໝຂອງ ອາຊາ ພໍ່ຂອງພະອົງນັ້ນ ພະອົງກໍໄດ້ກຳຈັດ ອອກ
ຈາກດິນແດນ [47]ບໍ່ມີກະສັດໃນປະເທດ ເອໂດມ ແຕ່ມີເຈົ້າເມືອງຜູ້ໜຶ່ງ ເປັນກະສັດ [48]ເຢໂຮຊາ-
ຟັດ ໄດ້ກໍ່ສ້າງເຮືອສຳເພົາ ຕາຊິດ ເພື່ອຈະໄປຂົນເອົາຄຳຈາກ ໂອຟີ ແຕ່ເຮືອສຳເພົານັ້ນໄປບໍ່ເຖິງ
ເພາະໄປ ແຕກຢູ່ທີ່ ເອັດຊີໂອນ-ເກເບ [49]ແລ້ວ ອາຮາຊີຢາ ລູກຊາຍຂອງ ອາຮາບ ກ່າວກັບ ເຢໂຮ-
ຊາຟັດ ວ່າ “ຂໍໃຫ້ຂ້າລາຊະການ ຂອງຂ້າພະເຈົ້າ ໄປນຳ ເຮືອສຳເພົາກັບຂ້າລາຊະການ ຂອງພະ
ອົງ” ແຕ່ ເຢໂຮຊາຟັດບໍ່ພໍໃຈ.

## ເຢໂຮຣາມຂຶ້ນປົກຄອງແທນເຢໂຮຊາຟັດ

[50]ເຢໂຮຊາຟັດ ໄດ້ລ່ວງລັບໄປຢູ່ກັບບັນພະບູລຸດຂອງພະອົງ ແລະພວກເຂົາໄດ້ຝັງພະສົບໄວ້
ກັບບັນພະບູລຸດຢູ່ໃນ ເມືອງ ດາວິດ ບັນພະບູລຸດຂອງພະອົງ ແລະ ເຢໂຮຣາມ ລູກຊາຍກໍຂຶ້ນປົກ-
ຄອງແທນພະອົງ.

## ການປົກຄອງອັນຊົ່ວຮ້າຍຂອງອາຮາຊີຢາ

[51]ອາຮາຊີຢາ ລູກຊາຍຂອງ ອາຮາບ ໄດ້ ເລີ່ມປົກຄອງຊາວ ອິສຣາເອນ ໃນ ຊາມາເຣຍ ໃນປີທີ
ສິບ ເຈັດຂອງລາຊະການ ເຢໂຮຊາຟັດ ກະສັດ ແຫ່ງ ຢູດາ ແລະພະອົງ ໄດ້ປົກຄອງ ອິສຣາເອນ
ລະຫວ່າງສອງປີ [52]ພະອົງໄດ້ເຮັດສິ່ງທີ່ຊົ່ວຮ້າຍໃນສາຍພຣະເນດຂອງ ພຣະຜູ້ເປັນເຈົ້າ ແລະ
ໄດ້ດຳເນີນຕາມພໍ່ແມ່ຂອງຕົນ ແລະຕາມ ເຢໂຣໂບອາມ ລູກຊາຍ ເນບັດຜູ້ໄດ້ນຳພາອິສຣາເອນ
ໃຫ້ເຮັດບາບດ້ວຍ [53]ພະອົງໄດ້ບົວລະບັດ ພະບາອານ ແລະນະມັດສະການພະນັ້ນ ແລະໄດ້
ເຮັດໃຫ້ ພຣະຜູ້ເປັນເຈົ້າ ພຣະເຈົ້າ ແຫ່ງ ອິສຣາເອນ ມີຄວາມໂກດຮ້າຍ ກັບທຸກວິທີທີ່ພໍ່ຂອງພະ
ອົງໄດ້ເຮັດຜ່ານມາແລ້ວນັ້ນ.

* * *

[ກ]2ຂຄວ 17:1; 20:31

# ປະຫວັດກະສັດ ສະບັບທີສອງ

## ບົດທີ 1

### ກະສັດອາຮາດຂອງອິສຣາເອນໄປຖາມບາອານ-ເຊບູນ

[1]ຫລັງຈາກ ອາຮາບ ເສຍຊີວິດ ແລ້ວຊາວ ໂມອາບ ກໍໄດ້ກະບົດຕໍ່ຊາວ ອິສຣາເອນ [2]ຝ່າຍ ອາ-
ຮາຊີຢາ ຕົກລົງມາຈາກເຮືອນທາງປ່ອງຢ້ຽມຊີ່ງຢູ່ທີ່ຫ້ອງຊັ້ນເທິງຂອງພະອົງໃນເມືອງຊາມາເຣຍ
ແລະປ່ວຍຢູ່ ເພິ່ນໃຊ້ບັນດາຜູ້ສົ່ງຂ່າວໄປໂດຍສັ່ງວ່າ "ຈົ່ງໄປຖາມບາອານ-ເຊບູນ ພະຂອງ
ເມືອງ ເອັກໂຣນວ່າ ຂ້ອຍຈະຫາຍຈາກຄວາມເຈັບປ່ວຍນີ້ຫລືບໍ່?"

### ເອລີຢາຕິຕຽນກະສັດ ແລະໄດ້ລອດພົ້ນຈາກມືຂອງພວກທະຫານ

[3]ແຕ່ທູດສະຫວັນຂອງ ພຣະຜູ້ເປັນເຈົ້າ ໄດ້ເວົ້າກັບ ເອລີຢາ ຊາວ ຕີຊະເບ ວ່າ "ຈົ່ງລຸກຂຶ້ນໄປ
ພົບບັນດາຜູ້ສົ່ງຂ່າວຂອງກະສັດຊາມາເຣຍ ແລະຈົ່ງເວົ້າກັບພວກເຂົາວ່າ 'ເພາະບໍ່ມີພຣະເຈົ້າ
ໃນ ອິສຣາເອນ ແລ້ວບໍ່ ທ່ານຈຶ່ງໄປຖາມ ບາອານ-ເຊບູນ ພະຂອງ ເອັກໂຣນ' [4]ເພາະສະນັ້ນ
ພຣະເຈົ້າ ໄດ້ກ່າວດັ່ງນີ້ວ່າ 'ເຈົ້າຈະບໍ່ໄດ້ລົງມາຈາກບ່ອນນອນທີ່ເຈົ້າຂຶ້ນໄປນັ້ນ ແຕ່ເຈົ້າຈະຕ້ອງ
ຕາຍຢ່າງແນ່ນອນ'" ແລ້ວ ເອລີຢາ ກໍໜີໄປ.

[5]ແລ້ວຜູ້ສົ່ງຂ່າວນັ້ນກໍໄດ້ກັບເຂົ້າໄປເຝົ້າກະສັດອາຮາສີຢາ ແລະພະອົງໄດ້ຖາມພວກເຂົາວ່າ
"ເປັນຫຍັງພວກເຈົ້າຈຶ່ງພາກັນ ກັບຄືນມາ" [6]ແລະພວກເຂົາໄດ້ທູນຕອບພະອົງວ່າ "ມີຊາຍຄົນ
ໜຶ່ງໄດ້ມາພົບກັບພວກຂ້ານ້ອຍ ແລະໄດ້ບອກວ່າ 'ຈົ່ງກັບໄປຫາກະສັດຜູ້ທີ່ໄດ້ໃຊ້ພວກທ່ານມາ
ແລະທູນເພິ່ນວ່າ ພຣະຜູ້ເປັນເຈົ້າ ໄດ້ກ່າວດັ່ງນີ້ວ່າ ເພາະບໍ່ມີພຣະເຈົ້າ ໃນພວກ ອິສຣາເອນ ແລ້ວ
ບໍ ເຈົ້າຈຶ່ງໃຊ້ຄົນໄປຖາມ ບາອານ-ເຊບູນ ພະຂອງ ເອັກໂຣນ ເພາະສະນັ້ນ ເຈົ້າຈະບໍ່ໄດ້ລົງມາ
ຈາກບ່ອນນອນທີ່ເຈົ້າໄດ້ຂຶ້ນໄປນັ້ນ ແຕ່ເຈົ້າຈະຕ້ອງຕາຍແນ່ນອນ'" [7]ພະອົງໄດ້ຖາມພວກເຂົາ
ວ່າ "ຄົນທີ່ໄດ້ມາພົບພວກເຈົ້າແລະໄດ້ບອກສິ່ງເຫລົ່ານີ້ແກ່ພວກເຈົ້ານັ້ນເປັນຄົນລັກສະນະໃດ?"
[8]ແລະພວກເຂົາທູນຕອບພະອົງວ່າ "ຄົນຜູ້ນັ້ນໄດ້ນຸ່ງຫົ່ມເສື້ອຜ້າຂົນສັດ ແລະມີໜັງຄາດແອວ
ຂອງເພິ່ນໄວ້" ພະອົງໄດ້ກ່າວວ່າ "ແມ່ນ ເອລີຢາ ຊາວ ຕີຊະເບ."

[9]ແລ້ວກະສັດກໍສັ່ງໃຫ້ນາຍທະຫານຜູ້ໜຶ່ງກັບທະຫານຫ້າສິບຄົນໄປຫາ ເອລີຢາ ແລະພວກ
ເຂົາໄດ້ຂຶ້ນໄປຫາເພິ່ນ ເບິ່ງແມ ເພິ່ນນັ່ງຢູ່ເທິງຈອມພູເຂົາ ແລະນາຍທະຫານໄດ້ກ່າວແກ່ເພິ່ນ
ວ່າ "ຄົນຂອງ ພຣະເຈົ້າ ເອີຍກະສັດສັ່ງດັ່ງນີ້ວ່າ 'ຈົ່ງລົງມາເທີນ'" [10]ແຕ່ ເອລີຢາ ໄດ້ຕອບນາຍ
ທະຫານຫ້າສິບຄົນນັ້ນວ່າ "ຖ້າຂ້ອຍ ເປັນຄົນຂອງ ພຣະເຈົ້າ ກໍຂໍໃຫ້ໄຟລົງມາຈາກຟ້າສະຫວັນ
ໄໝ້ເຜົາຜານເຈົ້າ ແລະຄົນທັງຫ້າສິບຄົນຂອງເຈົ້າເທີນ" ແລ້ວໄຟກໍໄດ້ລົງມາຈາກຟ້າສະຫວັນ
ແລະໄໝ້ເຜົາຜານພວກນາຍທະຫານພ້ອມກັບຄົນທັງຫ້າສິບຄົນນັ້ນ.

[11]ແລະກະສັດ ອາຮາຊີຢາ ໄດ້ສັ່ງໃຫ້ນາຍທະຫານຜູ້ໜຶ່ງກັບທະຫານຫ້າສິບຄົນອີກພວກໜຶ່ງໄປ
ຫາ ເອລີຢາ ແລະພວກເຂົາກໍກ່າວແກ່ເພິ່ນວ່າ "ຂ້າແດ່ຄົນຂອງ ພຣະເຈົ້າ ກະສັດກ່າວດັ່ງນີ້ວ່າ
'ລົງມາໄວໆເທີນ (ຈົ່ງຮີບລົງໄປເທີນ)'" [12]ແຕ່ ເອລີຢາ ໄດ້ຕອບພວກເຂົາວ່າ "ຖ້າຂ້ອຍເປັນຄົນ

ຂອງ ພຣະເຈົ້າ ກໍຂໍໃຫ້ໄຟລົງມາຈາກ ຟ້າສະຫວັນໄໝ້ເຜົາຜານເຈົ້າ ແລະທະຫານທັງຫ້າສິບ
ຄົນຂອງເຈົ້າເທີ້ນ" ແລະໄຟຂອງ ພຣະເຈົ້າ ໄດ້ ລົງມາຈາກຟ້າສະຫວັນ ແລະໄໝ້ເຜົາຜານນາຍ
ທະຫານ ຄົນນັ້ນກັບຄົນທັງຫ້າສິບຄົນຂອງລາວ.

13ແລະກະສັດ ອາຮາຊີຢາ ໄດ້ໃຊ້ໃຫ້ນາຍທະຫານຜູ້ໜຶ່ງໄປອີກເປັນ ເທື່ອທີສາມ ໂດຍໄປພ້ອມ
ກັບທະຫານຫ້າສິບຄົນຂອງລາວ ແລະນາຍທະຫານຜູ້ນີ້ໄດ້ຂຶ້ນໄປ ແລະຂຸເຂົ່າລົງຕໍ່ໜ້າ ເອລີຢາ
ແລະອ້ອນວອນເພິ່ນວ່າ "ຂ້າແດ່ຄົນຂອງ ພຣະເຈົ້າ ຂໍຊີວິດຂອງຂ້ານ້ອຍ ແລະຊີວິດຂອງຜູ້ຮັບ
ໃຊ້ຂອງທ່ານອີກຫ້າສິບຄົນນີ້ໃຫ້ເປັນສິ່ງປະເສີດໃນສາຍຕາຂອງທ່ານເທີ້ນ 14ເບິ່ງແມ ໄຟລົງມາ
ຈາກຟ້າສະຫວັນ ແລະໄດ້ເຜົາຜານນາຍທະຫານທັງສອງຄົນ ພ້ອມທັງທະຫານຫ້າສິບຄົນຂອງ
ລາວ ແຕ່ບັດນີ້ຂໍໃຫ້ຊີວິດຂອງຂ້ານ້ອຍເປັນສິ່ງປະເສີດຕໍ່ສາຍຕາຂອງທ່ານເທີ້ນ" 15ແລ້ວທູດ-
ສະຫວັນຂອງ ພຣະຜູ້ເປັນເຈົ້າ ໄດ້ກ່າວແກ່ ເອລີຢາວ່າ "ຈົ່ງລົງໄປກັບພວກເຂົາສາ ຢ່າຊູຢ້ານກົວ
ພວກເຂົາເລີຍ" ເພິ່ນກໍລຸກຂຶ້ນ ແລະໄດ້ລົງໄປກັບພວກເຂົາເຂົ້າເຝົ້າກະສັດ.

16ແລະທູນກະສັດວ່າ "ພຣະຜູ້ເປັນເຈົ້າ ໄດ້ກ່າວດັ່ງນີ້ວ່າ 'ເພາະເຈົ້າໄດ້ສົ່ງຜູ້ສົ່ງຂ່າວໄປຫາ
ບາອານ-ເຊບູນ ຮູບພະຂອງ ເມືອງ ເອັກໂຣນ ເພາະບໍ່ມີ ພຣະເຈົ້າ ໃນ ອິສຣາເອນ ທີ່ຈະທູນຖາມ
ພຣະທຳຂອງພຣະອົງຢ່າງນັ້ນບໍ? ເພາະສະນັ້ນເຈົ້າ ຈະບໍ່ໄດ້ລົງມາຈາກບ່ອນນອນທີ່ເຈົ້າໄດ້ຂຶ້ນ
ໄປນັ້ນ ແຕ່ເຈົ້າຈະຕ້ອງຕາຍແນ່ນອນ.'"

## ອາຮາຊີຢາເສຍຊີວິດແລ້ວເຢໂຣຣາມຂຶ້ນປົກຄອງແທນ

17ແລະກະສັດກໍໄດ້ເສຍຊີວິດຕາມພຣະທຳຂອງ ພຣະຜູ້ເປັນເຈົ້າ ຊຶ່ງ ເອລີຢາ ໄດ້ກ່າວໄວ້ນັ້ນ
ແລະ ໂຢຣາມ ກໍຂຶ້ນປົກຄອງ ແທນພະອົງ ໃນປີທີສອງຂອງລາຊະການ ເຢໂຣຣາມ ລູກຊາຍ ເຢ-
ໂຮຊາຟັດ ກະສັດຂອງ ຢູດາ ຍ້ອນວ່າກະສັດ ອາຮາຊີຢາບໍ່ມີລູກຊາຍ 18ລາຊະກິດຕ່າງໆຂອງ ອາ-
ຮາຊີຢາ ຊຶ່ງພະອົງໄດ້ເຮັດກໍໄດ້ບັນທຶກໄວ້ໃນໜັງສືຂ່າວຄາວຂອງກະສັດ ອິສຣາເອນ.

# ບົດທີ 2

## ພຣະຜູ້ເປັນເຈົ້າຊົງຮັບເອົາເອລີຢາ ຂຶ້ນສູ່ສະຫວັນຊັ້ນຟ້າ

1ໃນຕອນທີ່ ພຣະຜູ້ເປັນເຈົ້າ ຊົງບັນດານໃຫ້ລົມພະຍຸພັດ ເອລີຢາ ຂຶ້ນສູ່ສະຫວັນຊັ້ນຟ້ານັ້ນ
ເຫດການໄດ້ເປັນມາດັ່ງນີ້ ເອລີຢາກັບ ເອລີຊາ ພາກັນເດີນທາງອອກຈາກເມືອງ ກິນການ. 2ເມື່ອ
ໄປຕາມທາງ ເອລີຢາ ໄດ້ບອກ ເອລີຊາວ່າ, "ຂໍໃຫ້ເຈົ້າຢູ່ບ່ອນນີ້ ສ່ວນຂ້ອຍຈະໄປເມືອງ ເບັດ-
ເອນ ຕາມທີ່ ພຣະເຈົ້າ ຊົງສັ່ງ." ແຕ່ ເອລີຊາ ຕອບວ່າ, "ຂ້ານ້ອຍຂໍສາບານດ້ວຍຄວາມສັດຊື່ຕໍ່
ພຣະຜູ້ເປັນເຈົ້າຜູ້ຊົງພຣະຊົນຢູ່ ແລະຕໍ່ທ່ານເອງວ່າ ຂ້ານ້ອຍຈະບໍ່ພາກຈາກທ່ານໄປເລີຍ" ດັ່ງ-
ນັ້ນ ທັງສອງຈຶ່ງພາກັນເດີນທາງໄປຍັງເມືອງ ເບັດເອນ. 3ເມື່ອທັງສອງໄປຮອດແລ້ວ ພວກຄະ-
ນະຜູ້ປະກາດພຣະຄຳທີ່ຢູ່ໃນເມືອງ ເບັດເອນ ໄດ້ມາຫາ ເອລີຊາ ແລະເວົ້າຕໍ່ລາວວ່າ, "ເຈົ້າບໍ່ຮູ້ບໍ
ວ່າມື້ນີ້ ພຣະຜູ້ເປັນເຈົ້າ ຈະຊົງຮັບເອົານາຍຂອງເຈົ້າໄປຈາກເຈົ້າ." ເອລີຊາ ຕອບວ່າ, "ຢ່າສູ້ຢ້ານ
ຂ້ອຍຮູ້ແລ້ວ."

4ເອລີຢາ ເວົ້າຕໍ່ ເອລີຊາ ວ່າ, "ຂໍໃຫ້ເຈົ້າຢູ່ບ່ອນນີ້ ເພາະ ພຣະຜູ້ເປັນເຈົ້າ ຊົງສັ່ງຂ້ອຍໄປເມືອງ

ເຢຣິໂກ” ແຕ່ ເອລີຊາ ຕອບວ່າ, “ຂ້ານ້ອຍຂໍສາບານດ້ວຍຄວາມສັດຊື່ຕໍ່ ພຣະຜູ້ເປັນເຈົ້າ ຜູ້ຊົງ
ພຣະຊົນຢູ່ ແລະຕໍ່ທ່ານເອງວ່າ ຂ້ານ້ອຍຈະບໍ່ພາກຈາກທ່ານໄປເລີຍ” ແຕ່ທັງສອງກໍພາກັນ
ເດີນທາງໄປຍັງ ເມືອງ ເຢຣິໂກ. 5ພວກຄະນະຜູ້ປະກາດພຣະຄຳທີ່ຢູ່ໃນ ເມືອງ ເຢຣິໂກ ໄດ້ອອກ
ມາພົບ ເອລີຊາ ແລະເວົ້າຕໍ່ລາວວ່າ, “ເຈົ້າຮູ້ບໍ່ວ່າ ມື້ນີ້ ພຣະຜູ້ເປັນເຈົ້າ ຈະຊົງຮັບເອົານາຍຂອງ
ເຈົ້າໄປຈາກເຈົ້າ.” ເອລີຊາຕອບວ່າ, “ຢ່າສູ້ຢ້ານ ຂ້ອຍຮູ້ແລ້ວ.”
6ເອລີຢາ ຈຶ່ງຕອບຕໍ່ ເອລີຊາ ວ່າ, “ຂໍໃຫ້ເຈົ້າຢູ່ບ່ອນນີ້ ເພາະວ່າ ພຣະຜູ້ເປັນເຈົ້າ ຊົງສັ່ງໃຫ້
ຂ້ອຍໄປ ແມ່ນ້ຳ ຢໍແດນ” ແຕ່ ເອລີຊາ ຕອບຄືເກົ່າວ່າ, “ຂ້ານ້ອຍຂໍສາບານດ້ວຍຄວາມສັດຊື່ຕໍ່
ພຣະຜູ້ເປັນເຈົ້າ ຜູ້ຊົງພຣະຊົນຢູ່ ແລະຕໍ່ທ່ານເອງວ່າ ຂ້ານ້ອຍຈະບໍ່ພາກຈາກທ່ານໄປເລີຍ”
ແລ້ວທັງສອງກໍພາກັນເດີນທາງຕໍ່ໄປ. 7ມີພວກຜູ້ປະກາດພຣະຄຳຫ້າສິບຄົນຕິດຕາມພວກເພິ່ນ
ທັງສອງໄປຈົນຮອດແມ່ນ້ຳຢໍແດນ ແລ້ວພວກຜູ້ປະກາດພຣະຄຳກໍພາກັນຢືນຢູ່ຫ່າງໆ. 8ເອລີ-
ຢາ ໄດ້ແກ້ເສື້ອຄຸມອອກແລ້ວບິດເຂົ້າກັນ ແລະຕີລົງເທິງໜ້ານ້ຳ ນ້ຳນັ້ນກໍແຍກອອກ ທັງສອງ
ຈຶ່ງຍ່າງຂ້າມໄປສູ່ຝັ່ງນັ້ນ.
9ເມື່ອຂ້າມໄປແລ້ວ ເອລີຢາ ຈຶ່ງ ເວົ້າຕໍ່ ເອລີຊາ ວ່າ, “ກ່ອນທີ່ຂ້ອຍຈະຖືກຮັບຂຶ້ນໄປນີ້ ເຈົ້າ
ຢາກໄດ້ຫຍັງ ຈົ່ງຂໍມາເບິ່ງດູ.” ເອລີຊາຕອບວ່າ, “ຂໍໃຫ້ຂ້ານ້ອຍໄດ້ເປັນຜູ້ສືບແທນຮັບເອົາລິດ-
ເດດສ່ວນໃຫຍ່ຈາກທ່ານເທີ້ນ!” 10ເອລີຢາ ຈຶ່ງຕອບວ່າ, “ເຈົ້າຮ້ອງຂໍເອົາໃນຂໍ້ທີ່ເປັນໄປໄດ້ຍາກ
ທີ່ສຸດ ແຕ່ເຖິງຢ່າງໃດກໍຕາມ ຖ້າວ່າເຈົ້າເຫັນຂ້ອຍໃນຂະນະທີ່ຖືກຮັບຂຶ້ນໄປນັ້ນ ເຈົ້າຈະໄດ້ຮັບ
ຕາມຄຳຮ້ອງຂໍ ຄັນຖ້າເຈົ້າບໍ່ເຫັນ ເຈົ້າກໍຈະບໍ່ໄດ້ຮັບຫຍັງເລີຍ.”
11ແຕ່ແລ້ວ ໃນຂະນະທີ່ພວກເພິ່ນຍ່າງສົນທະນາກັນໄປນັ້ນ ລົດມ້າທີ່ມີແປວໄຟຫຸ້ມຫໍ່ແລ່ນ
ຜ່ານທ່ານທັງສອງໄປ ແລ້ວລົມພະຍຸກໍພັດເອົາ ເອລີຢາ ຂຶ້ນໄປສູ່ສະຫວັນຊັ້ນຟ້າ. 12ເອລີຊາ
ຫລຽວເຫັນຈຶ່ງຮ້ອງຫາ ເອລີຢາ ວ່າ, “ພໍ່ເອີຍ ພໍ່ເອີຍ ຜູ້ປ້ອງກັນຜູ້ຍິ່ງໃຫຍ່ແຫ່ງ ອິສຣາເອນ ເອີຍ
ທ່ານຈາກໄປແລ້ວນໍ?” ເມື່ອ ເອລີຊາ ບໍ່ ເຫັນ ເອລີຢາ ລາວກໍ ຈີກເສື້ອຂອງຕົນຈົນຂາດເຄິ່ງ.
13ແລ້ວກໍຈັບ ເອົາ ເສື້ອຄຸມຂອງ ເອລີຢາ ທີ່ຕົກລົງມານັ້ນ ກັບຄືນໄປຢືນຢູ່ແຄມແມ່ນ້ຳ ຢໍແດນ.
14ລາວເອົາເສື້ອ ເອລີຢາ ຟາດລົງນ້ຳ ແຕ່ນ້ຳກໍບໍ່ແຍກອອກຈາກກັນ ລາວຈຶ່ງຮ້ອງຂຶ້ນວ່າ, “ພຣະ-
ຜູ້ເປັນເຈົ້າ ຂອງ ເອລີຢາ ຢູ່ໃສ?” ແລ້ວໄດ້ຟາດນ້ຳອີກເທື່ອໜຶ່ງ ນ້ຳຈຶ່ງແຍກອອກ ເອລີຊາຍ່າງ
ຂ້າມໄປຝັ່ງນັ້ນ.
15ເມື່ອພວກຜູ້ປະກາດຫ້າສິບຄົນຈາກ ເມືອງ ເຢຣິໂກ ຫລຽວເຫັນດັ່ງນັ້ນ ຈຶ່ງເວົ້າຂຶ້ນວ່າ,
“ລິດເດດຂອງ ເອລີຢາ ໄດ້ຢູ່ນຳ ເອລີຊາ ແລ້ວ” ພວກເຂົາກໍພາກັນໄປຫາ ເອລີຊາ. 16ກົ້ມຂາບລົງ
ຕໍ່ໜ້າເພິ່ນ ທັງເວົ້າວ່າ, “ພວກຂ້ານ້ອຍທັງຫ້າສິບຄົນຍັງຢູ່ທີ່ນີ້ ທຸກຄົນລ້ວນແຕ່ເປັນຜູ້ແຂງແຮງ
ຂໍໃຫ້ພວກຂ້ານ້ອຍອອກໄປຊອກຫານາຍຂອງທ່ານເທີ້ນ ບາງທີ ພຣະວິນຍານ ຂອງ ພຣະຜູ້ເປັນ-
ເຈົ້າ ຊົງເອົາເພິ່ນໄປປະໄວ້ເທິງຈອມພູ ຫລືຕາມຮ່ອມພູບ່ອນໃດບ່ອນໜຶ່ງກໍອາດເປັນໄປໄດ້ ເອ-
ລີຊາຕອບວ່າ, “ບໍ່. ພວກເຈົ້າບໍ່ຕ້ອງໄປດອກ.” 17ແຕ່ພວກເຂົາໄດ້ອ້ອນວອນຂໍຈົນເພິ່ນຍອມໃຫ້
ພວກເຂົາໄປ ດັ່ງນັ້ນ ທັງຫ້າສິບຄົນນີ້ຈຶ່ງອອກທຽວຊອກຫາເປັນເວລາສາມມື້ ແຕ່ກໍບໍ່ພົບເລີຍ.
18ແລ້ວພວກເຂົາໄດ້ພາກັນກັບຄືນມາຫາ ເອລີຊາ ທີ່ຄອຍຖ້າຢູ່ ເມືອງ ເຢຣິໂກ ເອລີຊາ ຈຶ່ງ ເວົ້າຕໍ່

ພວກເຂົາວ່າ, “ຂ້ອຍໄດ້ບອກພວກເຈົ້າແລ້ວວ່າບໍ່ຕ້ອງໄປ.”

## ເອລີຊາເຮັດການອັດສະຈັນ

[19]ຊາວເມືອງ ເຢຣິໂກ ບາງຄົນໄດ້ເວົ້າຕໍ່ ເອລີຊາ ວ່າ, “ເມືອງນີ້ເປັນໜ້າຢູ່ຕາມທີ່ເຈົ້ານາຍເຫັນນີ້
ແຫລະ ຫາກແຕ່ວ່ານໍ້າໄດ້ເກີດເປັນພິດ ອັນເປັນເຫດໃຫ້ຍິງຫລາຍຄົນຫລຸລູກ.” [20]ເອລີຊາ ຈຶ່ງ
ບອກກັບພວກເຂົາວ່າ, “ຈົ່ງໄປເອົາເກືອໃສ່ຊາມໜ່ວຍໃໝ່ໆມາ.” ພວກເຂົາກໍໄດ້ປະຕິບັດຕາມ.
[21]ເພິ່ນໄດ້ໄປທີ່ບໍ່ນໍ້າ ຫວ່ານເກືອລົງນໍ້າ ແລະເວົ້າວ່າ, “ພຣະຜູ້ເປັນເຈົ້າ ຊົງກ່າວໄວ້ວ່າ ເຮົາເຮັດ
ໃຫ້ນໍ້ານີ້ສະອາດຕໍ່ໄປ ຄວາມຕາຍ ແລະການຫລຸລູກຈະບໍ່ມີອີກ.” [22]ຕັ້ງແຕ່ນັ້ນມາຈົນເຖິງທຸກມື້-
ນີ້ ນໍ້າກໍສະອາດດີ ເປັນຈິງຕາມ ເອລີຊາ ໄດ້ບອກໄວ້.

[23]ຈາກນັ້ນ ເອລີຊາ ກໍຈາກເມືອງ ເຢຣິໂກ ໄປສູ່ເມືອງ ເບັດເອນ ໃນຂະນະທີ່ເພິ່ນກຳລັງຍ່າງ
ຕາມທາງນັ້ນ ໄດ້ມີພວກເດັກນ້ອຍຜູ້ຊາຍ ຈຳນວນໜຶ່ງທີ່ອອກມາຈາກໃນເມືອງ ຮ້ອງເຍີ້ຍໃສ່
ເພິ່ນວ່າ, “ຂຶ້ນໄປ ຂຶ້ນໄປໂລດເຖົ້າຫົວລ້ານ.” [24]ເອລີຊາ ງວາກໜ້າມາຈ້ອງເບິ່ງພວກເຂົາ ແລະ
ສາບແຊ່ງພວກເຂົາໃນພຣະນາມຂອງ ພຣະຜູ້ເປັນເຈົ້າ ແລ້ວໄດ້ມີໝີແມ່ສອງໂຕອອກມາຈາກປ່າ
ໝີນັ້ນໄດ້ຈີກເດັກນ້ອຍຈຳນວນສີ່ສິບຄົນ ຢູ່ທີ່ນັ້ນຕາຍໝົດ. [25]ສ່ວນ ເອລີຊາ ກໍເດີນທາງໄປຍັງພູ
ກາເມນ ແລະພາຍລຸນມາກໍກັບຄືນມາກຸງ ຊາມາເຣຍ.

# ບົດທີ 3

## ໂຢຣາມປົກຄອງເໜືອອິສຣາເອນ

[1]ໃນປີທີສິບແປດຂອງລາຊະການ ເຢໂຮຊາຟັດ ກະສັດຂອງ ຢູດາ ໂຢຣາມ ລູກຊາຍຂອງ ອາ-
ຮາບ ໄດ້ເລີ່ມປົກຄອງ ເໜືອ ອິສຣາເອນ ໃນເມືອງ ຊາມາເຣຍ ແລະໄດ້ປົກຄອງຢູ່ລະຫວ່າງສິບ
ສອງປີ [2]ແລະເພິ່ນໄດ້ເຮັດສິ່ງທີ່ຊົ່ວໃນສາຍພຣະເນດຂອງ ພຣະຜູ້ເປັນເຈົ້າ ບໍ່ຄືກັບພໍ່ ແລະແມ່
ຂອງເພິ່ນ ເພິ່ນໄດ້ທຳລາຍເສົາສັກສິດຂອງ ພະບາອານ ຊຶ່ງພໍ່ຂອງເພິ່ນໄດ້ສ້າງໄວ້ [3]ເຖິງປານ
ນັ້ນ ເພິ່ນຍັງເກາະຕິດຢູ່ກັບບາບທັງຫລາຍຂອງ ເຢໂຣໂບອາມ ລູກຊາຍ ເນບັດ ຊຶ່ງໄດ້ເຮັດໃຫ້ອິ-
ສຣາເອນ ເຮັດບາບ ເພິ່ນບໍ່ໄດ້ເວັ້ນໜີຈາກບາບນັ້ນເລີຍ.

## ໂມອາບກະບົດຕໍ່ອິສຣາເອນ

[4]ຝ່າຍ ເມຊາ ແລະກະສັດຂອງ ໂມອາບ ໄດ້ເປັນຜູ້ດຳເນີນກິດຈະການລ້ຽງ ແກະທັງຫລາຍ
ແລະພະອົງຕ້ອງຖວາຍລູກແກະໜຶ່ງ ແສນ ໂຕ ພ້ອມກັບຂົນຂອງມັນໃຫ້ແກ່ກະສັດ ອິສຣາເອນ
[5]ແລະຢູ່ມາເມື່ອ ອາຮາບ ເສຍຊີວິດແລ້ວ ກະສັດຂອງ ໂມອາບ ກໍໄດ້ກະບົດຕໍ່ກະສັດຂອງ ອິສຣາ-
ເອນ [6]ກະສັດ ໂຢຣາມ ໄດ້ຍົກທັບອອກຈາກເມືອງ ຊາມາເຣຍ ໃນເວລານັ້ນ ແລະໄດ້ເກນຄົນ ອິ-
ສຣາເອນ ທັງໝົດ [7]ພະອົງໄດ້ສົ່ງ ຈົດໝາຍ ໄປຫາ ເຢໂຮຊາຟັດ ກະສັດຂອງ ຢູດາ ວ່າ “ກະສັດ
ຂອງ ໂມອາບ ໄດ້ກະບົດຕໍ່ຂ້າພະເຈົ້າ ພະອົງຈະໄປຮົບກັບ ໂມອາບ ພ້ອມກັບຂ້າພະເຈົ້າໄດ້ຫລື
ບໍ?” ແລະພະອົງໄດ້ຕອບວ່າ “ເຮົາຈະໄປ ເຮົາເປັນເໝືອນດັ່ງທີ່ທ່ານເປັນ ແລະປະຊາຊົນຂອງ
ເຮົາກໍເປັນເໝືອນປະຊາຊົນຂອງທ່ານ ບັນດາມ້າຂອງເຮົາກໍເປັນເໝືອນດັ່ງມ້າຂອງທ່ານ” [8]ແລ້ວ
ພະອົງໄດ້ຖາມວ່າ “ພວກເຮົາຈະຂຶ້ນໄປທາງໃດ?” ໂຢຣາມ ໄດ້ຕອບວ່າ “ໄປທາງຖິ່ນແຫ້ງແລ້ງ

ກັບດານເມືອງ ເອໂດມ" 9ແລະກະສັດຂອງ ອິສຣາເອນ ຈຶ່ງສະເດັດໄປພ້ອມກັບກະສັດຂອງ ຢູດາ
ແລະກະສັດ ເອໂດມ, ເມື່ອທັງສາມໄດ້ເດີນທາງອ້ອມໄປໄດ້ລະຫວ່າງເຈັດມື້ແລ້ວກໍຊອກຫາບໍ່ນ້ຳ
ໃຫ້ກອງທັບ ແລະໃຫ້ຝູງສັດທີ່ໄດ້ຕິດຕາມມານັ້ນບໍ່ໄດ້.

## ພຣະເຈົ້າໄດ້ຕຽມພັນທະມິດລະຫວ່າງເຢໂຮຊາຟັດກັບໂຢຣາມ

10ແລ້ວກະສັດຂອງ ອິສຣາເອນ ຈຶ່ງໄດ້ກ່າວວ່າ "ອະນິດຈາ, ພຣະຜູ້ເປັນເຈົ້າ ໄດ້ເອີ້ນກະສັດ
ທັງສາມນີ້ມາເພື່ອຈະມອບພວກເຂົາໄວ້ໃນມືຂອງ ໂມອາບ" 11ເຢໂຮຊາຟັດ ໄດ້ຖາມວ່າ "ຢູ່ບ່ອນ
ນີ້ບໍ່ມີຜູ້ທຳນວາຍຂອງ ພຣະຜູ້ເປັນເຈົ້າ ບໍ? ເພື່ອພວກເຮົາຈະໃຫ້ເພິ່ນທູນຖາມ ພຣະຜູ້ເປັນເຈົ້າ"
ແລ້ວຂ້າລາຊະການຄົນໜຶ່ງຂອງກະສັດ ອິສຣາເອນ ຈຶ່ງໄດ້ທູນວ່າ "ເອລີຊາ ລູກຊາຟາດຢູ່ບ່ອນນີ້
ເປັນຜູ້ທີ່ຖອກນ້ຳໃສ່ມື ເອລີຢາ" 12ແລະ ເຢໂຮຊາຟັດ ກ່າວວ່າ "ພຣະທຳຂອງ ພຣະຜູ້ເປັນເຈົ້າ ຢູ່
ກັບເພິ່ນ" ແລະກະສັດຂອງ ອິສຣາເອນ ແລະ ເຢໂຮຊາຟັດ ແລະກະສັດ ຂອງ ເອໂດມ ຈຶ່ງລົງໄປ
ຫາເພິ່ນ.

13ແລະ ເອລີຊາ ໄດ້ທູນຖາມກະສັດຂອງ ອິສຣາເອນ ວ່າ "ຂ້ານ້ອຍມີເລື່ອງຫຍັງກ່ຽວຂ້ອງກັບ
ທ່ານ ທ່ານຈຶ່ງໄປຫາຜູ້ທຳນວາຍຂອງພໍ່ ແລະຜູ້ທຳນວາຍຂອງແມ່ທ່ານເທີ້ນ" ແຕ່ກະສັດຂອງ
ອິສຣາເອນ ໄດ້ກ່າວກັບເພິ່ນວ່າ "ບໍ່ແມ່ນຢ່າງນັ້ນດອກ ດ້ວຍວ່າ ພຣະຜູ້ເປັນເຈົ້າ ໄດ້ເປັນຜູ້ເອີ້ນ
ກະສັດທັງສາມນີ້ມາເພື່ອຈະມອບໄວ້ໃນມືຂອງ ໂມອາບ" 14ເອລີຊາ ໄດ້ທູນວ່າ "ພຣະຜູ້ເປັນເຈົ້າ
ແຫ່ງຈັກກະວານ ຊຶ່ງຂ້ານ້ອຍບົວລະບັດຢູ່ຊົງພຣະຊົນຢູ່ສັນໃດ ຖ້າຂ້ານ້ອຍບໍ່ໄດ້ເຄົາລົບທ່ານຕໍ່-
ໜ້າ ເຢໂຮຊາຟັດ ກະສັດຂອງ ຢູດາ ແລ້ວ ຂ້ານ້ອຍຈະບໍ່ເບິ່ງໜ້າທ່ານເລີຍ 15ແລະດຽວນີ້ຂໍໃຫ້ນຳ
ຜູ້ຫລິ້ນພິນມາໃຫ້ຂ້ານ້ອຍຈັກຄົນໜຶ່ງ" ແລະ ເມື່ອຜູ້ຫລິ້ນພິນບັນເລງແລ້ວ ລິດອຳນາດ ຂອງ
ພຣະຜູ້ເປັນເຈົ້າ ກໍມາເໜືອ ເອລີຊາ.

## ພຣະເຈົ້າໄດ້ປະທານນ້ຳ ແລະການມີໄຊ

16ເພິ່ນໄດ້ທູນວ່າ "ພຣະຜູ້ເປັນເຈົ້າ ໄດ້ກ່າວດັ່ງນີ້ວ່າ 'ຈົ່ງຂຸດພູເຂົານີ້ໃຫ້ເປັນສະທົ່ວໄປໝົດ'
17ເພາະ ພຣະຜູ້ເປັນເຈົ້າ ກ່າວດັ່ງນີ້ວ່າ 'ເຈົ້າທັງຫລາຍຈະບໍ່ເຫັນລົມຫລືຝົນ ເຖິງຢ່າງໃດກໍດີ ພູ-
ເຂົານັ້ນຈະມີນ້ຳເຕັມໄປໝົດ ເພື່ອເຈົ້າຈະໄດ້ດື່ມນ້ຳນັ້ນ ທັງເຈົ້າ ແລະຝູງສັດລ້ຽງ ແລະສັດບ້ານ
ຂອງເຈົ້າ' 18ເລື່ອງຢ່າງນີ້ເປັນເລື່ອງນ້ອຍໆໃນສາຍພຣະເນດຂອງ ພຣະຜູ້ເປັນເຈົ້າ ພຣະອົງຈະ
ມອບຄົນ ໂມອາບ ໄວ້ໃນມືຂອງເຈົ້າດ້ວຍ 19ເຈົ້າຈະໂຈມຕີເມືອງທີ່ມີກຳແພງ ປ້ອມກັບເມືອງໃຫຍ່
ທຸກເມືອງ ແລະຈະບັກຕົ້ນໄມ້ອັນດີລົງທຸກຕົ້ນ ແລະຈະຖົມປ່ອງນ້ຳ ພຸທຸກປ່ອງ ແລະຈະເອົາຫີນ
ໄປທຳລາຍສ່ວນດິນດີທັງປວງ."

20ແລະຢູ່ມາເມື່ອຮຸ່ງເຊົ້າປະມານເວລາຖວາຍເຄື່ອງບູຊາ ກໍມີນ້ຳໄຫລມາຈາກທາງ ເມືອງ ເອ-
ໂດມ ຈົນແຜ່ນດິນນັ້ນເຕັມໄປດ້ວຍນ້ຳ.

## ຄົນໂມອາບພ່າຍແພ້

21ແລະເມື່ອຄົນ ໂມອາບ ທັງຫລາຍໄດ້ຍິນຂ່າວວ່າ ກະສັດທັງສາມນີ້ໄດ້ຍົກທັບຂຶ້ນໄປສູ້ຮົບກັບ
ຕົນ ພວກເຂົາໄດ້ເກນເອົາຄົນທຸກຄົນທີ່ສາມາດຖືອາວຸດໄດ້ ໄປໂຮມກັນເຂົ້າ ແລະໄດ້ຍົກທັບໄປ
ຕັ້ງຢູ່ຊາຍແດນ 22ເມື່ອພວກເຂົາຕື່ນຂຶ້ນໃນຕອນເຊົ້າ ແລະຕາເວັນພວມສ່ອງແສງຢູ່ເທິງນ້ຳ ຄົນ

ໂມອາບ ເຫັນນ້ຳທີ່ຢູ່ກົງກັນຂ້າມກັບຕົນແດງຄືເລືອດ 23ພວກເຂົາກ່າວວ່າ "ນີ້ແມ່ນເລືອດ, ບັນ-
ດາກະສັດນັ້ນໄດ້ສູ້ຮົບກັນເອງ ແລະຂ້າກັນເອງແລ້ວ ໂມອາບ ເອີຍຈົ່ງຮີບມາເອົາເຄື່ອງຂອງຂອງ
ພວກເຂົາເທີ້ນ" 24ແຕ່ເມື່ອພວກເຂົາມາຮອດຄ້າຍພັກອິສຣາເອນ ແລະຄົນອິສຣາເອນກໍໄດ້ລຸກ-
ຂຶ້ນຕໍ່ສູ້ກັບຄົນ ໂມອາບ ຈົນພວກເຂົາປົບໜີໄປຕໍ່ໜ້າພວກເຂົາ ແລະພວກເຂົາກໍໄດ້ເຂົ້າໄປໃນ
ແຜ່ນດິນ ແລະໄດ້ຂ້າຟັນຄົນໂມອາບ ແລະໄດ້ທຳລາຍເມືອງທັງຫລາຍ 25ພວກເຂົາໄດ້ເອົາ
ກ້ອນຫີນໄປຖິ້ມໃນໄຮ່ນາດິນດີທັງປວງໃຫ້ເຕັມ ແລະພວກເຂົາໄດ້ຖົມບ່ອງນ້ຳພຸທຸກບ່ອນແລະໄດ້
ບັກຕົ້ນໄມ້ທີ່ດີທັງປວງຈົນບໍ່ໃຫ້ເຫລືອສິ່ງໜຶ່ງສິ່ງໃດໃນເມືອງ ກີເຣ-ຮາເຣເສັດ ເວັ້ນແຕ່ຫີນທັງ-
ຫລາຍ ບັນດານັກຍິງກັນຖຸນ[ກ] ໄດ້ອ້ອມເມືອງ ແລະໂຈມຕີເມືອງນັ້ນໄດ້ 26ເມື່ອກະສັດຂອງ
ໂມອາບ ເຫັນວ່າຈະສູ້ບໍ່ໄດ້ແລ້ວ ພະອົງຈຶ່ງໄດ້ເອົາທະຫານຖືດາບເຈັດຮ້ອຍຄົນໄປນຳເພື່ອຈະຕີ
ຜ່າອອກໄປຮອດກະສັດເມືອງເອໂດມ ແຕ່ວ່າອອກໄປບໍ່ໄດ້ 27ແລະພະອົງໄດ້ນຳເອົາລູກຊາຍ
ກົກ ຜູ້ທີ່ສົມຄວນຈະຂຶ້ນປົກຄອງແທນ ແລະໄດ້ຖວາຍລູກນັ້ນເປັນເຄື່ອງເຜົາບູຊາດ້ວຍໄຟເທິງ
ກຳແພງ ແລະມີພຣະພິໂລດ[ຂ] ອັນໃຫຍ່ໃນພວກອິສຣາເອນ ພວກເຂົາໄດ້ຍ້າຍໄປຈາກພະອົງ
ແລະໄດ້ກັບເມືອບ້ານເມືອງຂອງຕົນ.

# ບົດທີ 4

## ນ້ຳມັນໜຶ່ງໄຫຂອງແມ່ໝ້າຍຄົນໜຶ່ງ

1ມີຍິງຄົນໜຶ່ງຈາກພວກເມຍຂອງລູກຜູ້ທຳນວາຍຮ້ອງໃສ່ ເອລີຊາວ່າ "ຜູ້ຮັບໃຊ້ຂອງທ່ານຄື
ຜົວຂອງຂ້ານ້ອຍໄດ້ເສຍຊີວິດໄປແລ້ວ ແລະທ່ານກໍຮູ້ຢູ່ແລ້ວວ່າຜູ້ຮັບໃຊ້ຂອງທ່ານຢຳເກງພຣະ-
ຜູ້ເປັນເຈົ້າ ແລະເຈົ້າໜີ້ໄດ້ມາເພື່ອຈະໄດ້ຈັບເອົາລູກສອງຄົນຂອງຂ້ານ້ອຍໄປເປັນຂ້າທາດຂອງ
ລາວ" 2ເອລີຊາຕອບນາງວ່າ "ບອກຂ້ອຍມາດູວ່າຈະໃຫ້ຂ້ອຍເຮັດສິ່ງໃດເພື່ອຊ່ວຍເຈົ້າ ຈົ່ງ
ບອກຂ້ອຍເຈົ້າມີສິ່ງໃດໃນເຮືອນຂອງເຈົ້າແດ່?" ແລະນາງຕອບວ່າ "ຂ້າໃຊ້ຍິງຂອງທ່ານບໍ່ມີສິ່ງ
ໃດໃນເຮືອນນອກຈາກນ້ຳມັນໜຶ່ງໝໍ້ດິນ" 3ແລ້ວ ເອລີຊາກ່າວວ່າ "ຈົ່ງອອກໄປນອກບ້ານຂໍຢືມ
ພາຊະນະເປົ່າຈາກເພື່ອນບ້ານທຸກຄົນຂອງເຈົ້າ ແລະຈົ່ງຢືມມາຫລາຍອັນເທົ່າທີ່ຢືມໄດ້ 4ແລ້ວ
ຈົ່ງເຂົ້າໄປໃນເຮືອນປິດປະຕູຂັງຕົວເຈົ້າ ແລະລູກຊາຍທັງສອງຂອງເຈົ້າໄວ້ ແລະຈົ່ງເທນ້ຳມັນ
ໃສ່ພາຊະນະທັງໝົດ ຖ້າໜ່ວຍໃດເຕັມແລ້ວໃຫ້ຕັ້ງໄວ້ຕ່າງຫາກ" 5ຍິງນັ້ນກໍລາໄປ ແລະປິດປະ-
ຕູຂັງຕົວນາງ ແລະລູກຊາຍຂອງນາງໄວ້ ລູກຊາຍໄດ້ສົ່ງພາຊະນະມາໃຫ້ ແລະນາງກໍເທນ້ຳມັນ
ໃສ່ບັນດາພາຊະນະເຫລົ່ານັ້ນ 6ແລະຢູ່ມາເມື່ອພາຊະນະເຕັມໝົດແລ້ວ ນາງຈຶ່ງບອກລູກຊາຍວ່າ
"ເອົາພາຊະນະມາໃຫ້ແມ່ອີກໜ່ວຍໜຶ່ງ" ແລະລາວຕອບນາງວ່າ "ບໍ່ມີອີກແລ້ວ" ແລ້ວນ້ຳມັນກໍ
ຢຸດໄຫລ 7ນາງໄດ້ໄປເລົ່າເລື່ອງນັ້ນໃຫ້ຄົນຂອງພຣະເຈົ້າຟັງ ແລະເພິ່ນບອກວ່າ "ຈົ່ງໄປຂາຍ
ນ້ຳມັນເອົາເງິນໄປຊຳລະໜີ້ຂອງເຈົ້າ ສ່ວນທີ່ເຫລືອ ເຈົ້າ ແລະລູກຂອງເຈົ້າຈົ່ງໃຊ້ລ້ຽງຊີວິດ."

## ເອລີຊາ ແລະຍິງຊາວຊູເນມ

8ມື້ໜຶ່ງ ເອລີຊາໄດ້ເດີນທາງເຂົ້າໄປຍັງເມືອງຊູເນມ ມີຍິງຖານະດີຜູ້ໜຶ່ງ ເຊີນເພິ່ນໄປກິນ

[ກ]ນັກຍິງສະລິງ [ຂ]ຄວາມເຄືອງໃຈ

ເຂົ້ານຳ ແລ້ວທຸກເທື່ອເມື່ອເພິ່ນເດີນທາງມາທາງນີ້ ເພິ່ນກໍແວ່ໄປກິນເຂົ້ານຳສະເໝີ. 9ຍິງຄົນນີ້
ໄດ້ເວົ້າກັບຜົວຕົນວ່າ, “ຂ້ອຍເຊື່ອແນ່ວ່າ ຊາຍຜູ້ນີ້ມາເຮືອນເຮົາເລື້ອຍໆ ຈະຕ້ອງເປັນຄົນຂອງ
ພຣະເຈົ້າຢ່າງແນ່ນອນ. 10ໃຫ້ພວກເຮົາຈັດແຈງຫ້ອງນອນຢູ່ເທິງຫລັງຄາພຽງ ແລ້ວຈັດເອົາ
ໂຕະ ຕັ່ງ ແລະຕະກຽງໄວ້ໃຫ້ເພິ່ນ ເມື່ອໃດເພິ່ນມາທາງເຮົາ ກໍໃຫ້ເພິ່ນພັກຢູ່ບ່ອນນັ້ນ.

11ມື້ໜຶ່ງ ເອລີຊາມາເມືອງຊູເນມອີກ ເພິ່ນໄດ້ແວ່ຂຶ້ນໄປພັກເຊົາຢູ່ຫ້ອງນັ້ນຄືເກົ່າ. 12ເພິ່ນໄດ້
ບອກເກຮາຊີ ຄົນໃຊ້ຂອງເພິ່ນໃຫ້ໄປເອີ້ນຍິງຊາວຊູເນມມາຫາ. 13ເມື່ອຍິງນັ້ນມາຮອດ ເອລີ-
ຊາກໍບອກໃຫ້ຄົນໃຊ້ຖາມນາງວ່າ ເຈົ້າໄດ້ຫຍຸ້ງຍາກລຳບາກຍ້ອນພວກເຮົາຫລາຍ ເຮົາຂໍຖາມ
ເຈົ້າວ່າ ເຈົ້າຢາກໃຫ້ຂ້ອຍຊ່ອຍຫຍັງແດ່? ບາງທີເຈົ້າອາດຢາກໃຫ້ຂ້ອຍໄປທູນຄຸນງາມຄວາມດີ
ຂອງເຈົ້າຕໍ່ກະສັດ ຫລືລາຍງານຕໍ່ຜູ້ບັນຊາການກອງທັບອາດເປັນໄປໄດ້. ນາງຈຶ່ງຕອບວ່າ,
“ຂ້ານ້ອຍຢູ່ນຳຍາດພີ່ນ້ອງ ກໍພໍຢູ່ພໍກິນແລ້ວ.” 14ເອລີຊາຖາມເກຮາຊີວ່າ, “ຄັນຊັ້ນຈະໃຫ້ຂ້ອຍ
ຊ່ອຍຫຍັງລາວ” ຄົນໃຊ້ຈຶ່ງຕອບວ່າ, “ມີຢູ່ ເພາະລາວເປັນຄົນບໍ່ມີລູກ ແລະຜົວລາວກໍເປັນຄົນ
ເຖົ້າແກ່ຫລາຍແລ້ວ.” 15ເອລີຊາຈຶ່ງໃຫ້ຄົນໃຊ້ໄປເອີ້ນນາງຫລົບມາຫາອີກ ນາງກໍມາຫາ ແລະກໍ
ຢືນຢູ່ປາກປະຕູ. 16ເພິ່ນຈຶ່ງບອກນາງວ່າ, “ປີໜ້າໃນເວລາດຽວກັນນີ້ ເຈົ້າຈະໄດ້ອູ້ມລູກຊາຍ.”
ແຕ່ນາງອຸທານຂຶ້ນວ່າ, “ໂອຍ! ທ່ານເອີຍ ທ່ານເປັນຄົນຂອງພຣະເຈົ້າ ກະລຸນາຢ່າຕົວະຂ້າ-
ນ້ອຍເລີຍ.” 17ແລ້ວຕໍ່ມາຍິງຄົນນີ້ກໍຖືພາ ເມື່ອເຖິງເວລາກຳນົດ ລາວກໍເກີດລູກຊາຍຕາມທີ່ເອ-
ລີຊາໄດ້ບອກໄວ້.

18ເມື່ອເດັກນ້ອຍນີ້ໃຫຍ່ເຕີບໂຕຂຶ້ນ ເຊົ້າມື້ໜຶ່ງລາວກໍອອກໄປຫາພໍ່ຢູ່ທົ່ງນາ ໃນບ່ອນທີ່ພວກ
ເຂົາກ່ຽວເຂົ້າຢູ່. 19ໃນເວລານັ້ນລາວຮ້ອງຂຶ້ນວ່າ, “ພໍ່ ຂ້ານ້ອຍເຈັບຫົວ ພໍ່ຂ້ານ້ອຍເຈັບຫົວ”
ຜູ້ເປັນພໍ່ຈຶ່ງບອກຄົນໃຊ້ອູ້ມເອົາເດັກນັ້ນເມືອຫາແມ່ຢູ່ເຮືອນ. 20ເມື່ອລາວອູ້ມເດັກນ້ອຍໄປໃຫ້ແມ່
ຢູ່ເທິງເຮືອນ ນາງກໍອູ້ມເອົາລູກໄວ້ເທິງຕັກຈົນຮອດທ່ຽງ ແລ້ວລູກນັ້ນກໍສິ້ນໃຈຕາຍ. 21ຜູ້ເປັນ
ແມ່ຈຶ່ງນຳລູກໄປປົງໄວ້ເທິງຕຽງນອນຂອງເອລີຊາ ແລ້ວນາງກໍອອກມາ ແລະອັດປະຕູໄວ້ ນາງ
ເອີ້ນບອກຜົວວ່າ, 22“ບອກຄົນໃຊ້ເອົາລໍໂຕໜຶ່ງມາໃຫ້ຂ້ອຍແດ່ ຂ້ອຍຈະຂີ່ໄປຫາຄົນຂອງພຣະ-
ເຈົ້າ ແລະຈະກັບມາໄວເທົ່າທີ່ຈະໄວໄດ້.” 23ຜົວຈຶ່ງຖາມວ່າ, “ເປັນຫຍັງຈຶ່ງໄປຫາເພິ່ນມື້ນີ້? ມັນ
ບໍ່ແມ່ນຍາມເດືອນອອກໃໝ່ ຫລືວັນບໍລິສຸດຂອງພຣະເຈົ້າ.” 24ແຕ່ນາງຕອບວ່າ, “ບໍ່ເປັນຫຍັງ
ດອກ” ແລ້ວນາງໄດ້ບອກໃຫ້ຄົນໃຊ້ເອົາອານໃສ່ຫລັງລໍ ແລະເວົ້າວ່າ, “ພາຂ້ອຍໄປໃຫ້ໄວເທົ່າທີ່
ຈະໄວໄດ້ ຢ່າຢຸດກາງທາງຈົນກວ່າຈະໄດ້ຮັບຄຳສັ່ງຈາກຂ້ອຍເສຍກ່ອນ.”

25ນາງໄດ້ອອກເດີນທາງໄປຍັງພູກາເມນ ບ່ອນທີ່ເອລີຊາອາໄສຢູ່. ເມື່ອເອລີຊາຫລຽວເຫັນ
ນາງແຕ່ໄກໆ ເພິ່ນຈຶ່ງເວົ້າຕໍ່ເກຮາຊີ ຄົນໃຊ້ຂອງເພິ່ນວ່າ, 26“ເບິ່ງດຸຫັ້ນ ຍິງຊາວຊູເນມມາ
ແມ່ນບໍ? ຮີບຟ້າວອອກໄປຕ້ອນຮັບ ແລະຖາມນາງເບິ່ງວ່າ, “ນາງທັງຜົວ ແລະລູກຍັງສະບາຍ-
ດີຢູ່ບໍ? 27ແລ້ວນາງກໍຕອບວ່າ, “ສະບາຍດີ” ແຕ່ເມື່ອນາງເຂົ້າມາຫາເອລີຊາ ນາງກໍກົ້ມກອດ
ຕີນຂອງເອລີຊາ ເກຮາຊີຈຶ່ງຍ່າງເຂົ້າມາຫາເພິ່ນຈະດຶງນາງອອກໄປ ແຕ່ເອລີຊາບອກວ່າ,
“ປ່ອຍນາງເທີ້ນ ເຈົ້າບໍ່ເຫັນບໍວ່າ ນາງມີຄວາມທຸກໃຈອັນໃຫຍ່ຫລວງ ພຣະຜູ້ເປັນເຈົ້າຊົງອຳ
ເລື່ອງນີ້ໄວ້ ໂດຍບໍ່ໄດ້ບອກໃຫ້ຂ້ອຍຮູ້.” 28ນາງເວົ້າຂຶ້ນວ່າ, “ຂ້ານ້ອຍເຄີຍຂໍຈາກທ່ານກ່ຽວກັບ

ເລື່ອງລູກຊາຍນັ້ນ ແມ່ນບໍ? ຂ້ານ້ອຍໄດ້ເວົ້າບໍ່ແມ່ນບໍວ່າ ຢ່າຕົວະຂ້ານ້ອຍເລີຍ.” [29]ເມື່ອເປັນ
ດັ່ງນັ້ນ ເອລີຊາຈຶ່ງເວົ້າຕໍ່ເກຮາຊີວ່າ, “ຈົ່ງຟ້າວຖືໄມ້ເທົ້າຂອງຂ້ອຍນີ້ລ່ວງໜ້າໄປກ່ອນ ຖ້າວ່າ
ເຈົ້າພົບໃຜກໍຢ່າຖາມສະບາຍເຂົາ ແລະຖ້າໃຜຖາມສະບາຍດີເຈົ້າກໍຢ່າຕອບເຂົາເດີ ໃຫ້ເອົາໄມ້-
ເທົ້າຂອງຂ້ອຍນີ້ໄປຢຽດໃສ່ເທິງເດັກນ້ອຍນັ້ນ.” [30]ແຕ່ແມ່ຂອງເດັກນ້ອຍເວົ້າຕໍ່ເອລີຊາວ່າ,
“ຂ້ານ້ອຍຂໍສາບານຢ່າງສັດຊື່ຕໍ່ພຣະຜູ້ເປັນເຈົ້າ ຜູ້ຊົງພຣະຊົນຢູ່ແລະຕໍ່ທ່ານເອງວ່າ ຂ້ານ້ອຍ
ຈະບໍ່ຈາກທ່ານໄປ” ດັ່ງນັ້ນເອລີຊາ ແລະແມ່ຂອງເດັກຈຶ່ງພາກັນອອກເດີນທາງໄປຕາມຫລັງ
ຊຶ່ງເກຮາຊີໄດ້ມຸ່ງໜ້າໄປກ່ອນ.

[31]ແລະໄດ້ເອົາໄມ້ເທົ້າຢຽດໃສ່ເດັກນ້ອຍນັ້ນ ແຕ່ບໍ່ມີສຽງ ຫລືຄຳຕອບຢ່າງໃດເລີຍ ນາງຈຶ່ງ
ກັບຄືນມາບອກເອລີຊາວ່າ, “ເດັກນ້ອຍຍັງບໍ່ທັນຟື້ນຕົວເທື່ອ.” [32]ເມື່ອເອລີຊາເຂົ້າໄປໃນເຮືອນ
ເພິ່ນກໍເຫັນເດັກນ້ອຍນອນຢູ່ເທິງຕຽງ ເພິ່ນຈຶ່ງອັດປະຕູໄວ້. [33]ແລ້ວໄດ້ອ້ອນວອນຫາພຣະຜູ້-
ເປັນເຈົ້າ. [34]ເພິ່ນຂຶ້ນເທິງຕຽງ ແລະນອນຢຽດຕົວລົງເຕັງເດັກນ້ອຍ ໂດຍເອົາປາກເຕັງປາກ
ຕາເຕັງຕາ ແລະມືເຕັງມື ເມື່ອເພິ່ນຢຽດເຕັງເດັກນ້ອຍຢູ່ນັ້ນເນື້ອໜັງຂອງເດັກກໍຮູ້ສຶກອຸ່ນຂຶ້ນມາ.
[35]ເພິ່ນຈຶ່ງລຸກຍ່າງໄປມາຢູ່ໃນຫ້ອງແລ້ວໄປນອນຢຽດຕົວເຕັງເດັກນ້ອຍອີກເທື່ອໜຶ່ງ ເທື່ອນີ້ເດັກ-
ນ້ອຍຈາມເຖິງເຈັດເທື່ອ ແລະມືນຕາຂຶ້ນ. [36]ແລ້ວເອລີຊາຮ້ອງບອກເກຮາຊີ ໃຫ້ໄປເອີ້ນແມ່
ຂອງເດັກນ້ອຍມາ ເມື່ອນາງມາຮອດ ເພິ່ນຈຶ່ງເວົ້າຕໍ່ນາງວ່າ, “ເອົາລູກຊາຍຂອງເຈົ້າໄປແມ.”
[37]ນາງເຂົ້າໄປທາງໃນ ກົ້ມຂາບຕີນເອລີຊາ ແລະພາລູກຊາຍຂອງນາງອອກໄປ.

## ເອລີຊາຊຳລະອາຫານທີ່ມີພິດ

[38]ເອລີຊາມາຮອດເມືອງກິນການອີກ ເມື່ອແຜ່ນດິນເກີດການອຶດຢາກອາຫານ ແລະພວກ
ລູກສິດຂອງຜູ້ທຳນວາຍນັ່ງຢູ່ ຕໍ່ໜ້າເພິ່ນ ແລະເພິ່ນໄດ້ບອກກັບຄົນໃຊ້ຂອງຕົນວ່າ “ຈົ່ງເອົາໝໍ້
ໜ່ວຍໃຫຍ່ຄ້າງໄຟ ແລະຕົ້ມແກງໃຫ້ແກ່ພວກລູກສິດຂອງຜູ້ທຳນວາຍສາ” [39]ຄົນໜຶ່ງໃນພວກ
ນັ້ນໄດ້ອອກໄປເກັບຜັກປ່າຢູ່ຕາມທົ່ງນາ ແລະພົບເຄືອໝາກໄມ້ປ່າເຄືອໜຶ່ງ ພວກເຂົາເກັບເອົາ
ຜັກປ່ານັ້ນ ກັບນ້ຳເຕົ້າປ່າຈົນເຕັມພົກ ແລະກັບມາປາດໃສ່ໃນໝໍ້ແກງໂດຍທີ່ບໍ່ຮູ້ວ່າເປັນຜັກ ຫລື
ໝາກຫຍັງ [40]ແລ້ວລາວກໍຖອກແກງອອກໃຫ້ຄົນເຫລົ່ານັ້ນກິນ ຂະນະທີ່ພວກເຂົາກຳລັງກິນແກງ
ຢູ່ນັ້ນ ລາວຮ້ອງຂຶ້ນວ່າ “ຂ້າແດ່ຄົນຂອງພຣະເຈົ້າ ມີຄວາມຕາຍຢູ່ໃນໝໍ້ນີ້” ແລະພວກເຂົາກໍ
ຮັບປະທານບໍ່ໄດ້ [41]ເພິ່ນໄດ້ບອກວ່າ “ຈົ່ງເອົາແປ້ງມາພີ້” ເພິ່ນໃສ່ແປ້ງລົງໃນໝໍ້ ແລະບອກວ່າ
“ຈົ່ງຖອກອອກໃຫ້ຄົນເຫລົ່ານັ້ນຮັບປະທານ” ແລະບໍ່ມີອັນຕະລາຍຢູ່ໃນໝໍ້ນັ້ນ.

## ເອລີຊາລ້ຽງໜຶ່ງຮ້ອຍຄົນຢ່າງອັດສະຈັນ

[42]ມີຊາຍຄົນໜຶ່ງມາຈາກເຮືອນບາອານ-ຊາລີຊາ ນຳສິ່ງຂອງມາໃຫ້ຄົນຂອງພຣະເຈົ້າ ມີ
ເຂົ້າຈີ່ຊຶ່ງເປັນໝາກຜົນທຳອິດຄືເຂົ້າຈີ່ທີ່ເຮັດດ້ວຍເຂົ້າບາເລຊາວກ້ອນແລະເຂົ້າຮວງໃໝ່ໃສ່ກະ-
ສອບຂອງລາວມາ ແລະເອລີຊາບອກວ່າ “ຈົ່ງໃຫ້ແກ່ຄົນເຫລົ່ານັ້ນກິນເທີ້ນ” [43]ແຕ່ຄົນໃຊ້ຄົນນີ້
ຕອບວ່າ “ຂ້າພະເຈົ້າຈະຕັ້ງອາຫານເຫລົ່ານີ້ໃຫ້ຄົນໜຶ່ງຮ້ອຍຄົນກິນໄດ້ຢ່າງໃດ” ເພິ່ນຈຶ່ງສັ່ງຊ້ຳ
ວ່າ “ຈົ່ງຍົກໃຫ້ຄົນເຫລົ່ານັ້ນກິນສາ ເພາະພຣະຜູ້ເປັນເຈົ້າກ່າວສັ່ງດັ່ງນີ້ວ່າ ‘ພວກເຂົາຈະໄດ້
ຮັບປະທານ ແລະຍັງເຫລືອອີກ’” [44]ລາວຈຶ່ງຕັ້ງອາຫານໄວ້ຕໍ່ໜ້າພວກເຂົາທັງຫລາຍ, ພວກເຂົາ

ກໍຮັບປະທານ ແລະຍັງເຫລືອຢູ່ຕາມພຣະທຳຂອງ ພຣະຜູ້ເປັນເຈົ້າ.

# ບົດທີ 5

## ນາອາມານຜູ້ບັນຊາການທະຫານເດີນທາງໄປຫາເອລີຊາ

[1]ນາອາມານ ຜູ້ບັນຊາການທະຫານ ຊີເຣຍ ເປັນບຸກຄົນຄຳຄັນ ແລະໄດ້ຮັບກຽດອັນສູງສົ່ງ
ຈາກເຈົ້າຊີວິດແຫ່ງຊີເຣຍ ເພາະວ່າ ພຣະຜູ້ເປັນເຈົ້າຊົງໃຫ້ເພິ່ນເປັນຜູ້ນຳໄຊຊະນະມາສູ່ກອງ-
ທັບຊີເຣຍ ເພິ່ນເປັນນາຍທະຫານທີ່ເກັ່ງກ້າ ແຕ່ເພິ່ນເປັນຄົນຂີ້ທູດ. [2]ມີເທື່ອໜຶ່ງ ເມື່ອພວກຊີ-
ເຣຍ ໄປຕໍ່ສູ້ກັບພວກ ອິສຣາເອນ ພວກເຂົາໄດ້ຈັບເອົາຍິງສາວຄົນໜຶ່ງມາເປັນຄົນໃຊ້ຂອງເມຍ
ຂອງ ນາອາມານ. [3]ມີເທື່ອໜຶ່ງ ຄົນໃຊ້ຜູ້ນີ້ເວົ້າຕໍ່ນາຍຍິງຂອງນາງວ່າ, "ຂ້ານ້ອຍຢາກໃຫ້ນາຍຜູ້
ຊາຍໄປຫາຜູ້ປະກາດພຣະຄຳທີ່ ຊາມາເຣຍ ຄົນຜູ້ນັ້ນສາມາດປົວພະຍາດຂີ້ທູດຂອງເຈົ້ານາຍ
ໃຫ້ດີໄດ້."

[4]ເມື່ອ ນາອາມານ ໄດ້ຍິນດັ່ງນັ້ນ ເພິ່ນກໍໄປທູນ ເຈົ້າຊີວິດຕາມທີ່ຄົນໃຊ້ໄດ້ລາຍງານໃຫ້ຟັງ.
[5]ເຈົ້າຊີວິດແຫ່ງ ຊີເຣຍ ຈຶ່ງບອກ ນາອາມານ ວ່າ, "ຈົ່ງໄປຫາເຈົ້າຊີວິດແຫ່ງ ອິສຣາເອນ ແລະຍື່ນ
ຈົດໝາຍນີ້ໃຫ້ພະອົງ." ນາອາມານ ໄດ້ນຳເອົາເງິນສາມສິບພັນຫລຽນ ພ້ອມທັງເຄື່ອງນຸ່ງທີ່ສວຍ
ງາມສິບຊຸດອອກເດີນທາງໄປ. [6]ເພິ່ນໄດ້ຖວາຍສານໃຫ້ແກ່ເຈົ້າຊີວິດ ອິສຣາເອນ ໃນລາຊະສານ
ນັ້ນມີເນື້ອຄວາມດັ່ງນີ້ "ນີ້ຄື ນາອາມານ ນາຍທະຫານຂອງຂ້າພະເຈົ້າ ຂ້າພະເຈົ້າຢາກໃຫ້ພະ
ອົງປົວພະຍາດຂີ້ທູດໃຫ້ລາວ." [7]ເມື່ອເຈົ້າຊີວິດ ອິສຣາເອນ ໄດ້ອ່ານລາຊະສານແລ້ວ ພະອົງກໍ
ຈີກເຄື່ອງສະຫລອງພະອົງອອກ ແລະເວົ້າຂຶ້ນດ້ວຍຄວາມເສຍພະໄທວ່າ, "ຂ້ອຍແມ່ນ ພຣະເຈົ້າ
ຜູ້ມີອຳນາດທີ່ບອກໃຫ້ຕາຍ ຫລືໃຫ້ເປັນໄດ້ຊັ້ນບໍ? ຈຶ່ງຢາກໃຫ້ຂ້ອຍປົວພະຍາດຂີ້ທູດໃຫ້? ລາວ
ຢາກຊອກເລື່ອງຜິດກັນກັບຂ້ອຍບໍ?

[8]ເມື່ອຜູ້ປະກາດພຣະຄຳ ເອລີຊາ ຮູ້ຂ່າວເຫດການທີ່ເກີດຂຶ້ນ ເພິ່ນກໍສົ່ງຄວາມໄປທູນເຈົ້າຊີ-
ວິດວ່າ, "ເປັນຫຍັງພະອົງຈຶ່ງຊົງທຸກພະໄທໜັກຂໍຊົງສົ່ງຊາຍຄົນນັ້ນມາຫາຂ້ານ້ອຍ ຂ້ານ້ອຍຈະ
ແນະນຳໃຫ້ນາຍຮູ້ຈັກວ່າ ຢູ່ທີ່ອິສຣາເອນນີ້ ມີຜູ້ປະກາດພຣະຄຳ." [9]ດັ່ງນັ້ນ ນາອາມານພ້ອມ
ທັງຄະນະ ແລະລົດມ້າກໍມາຮອດເຮືອນຂອງ ເອລີຊາ. [10]ຝ່າຍ ເອລີຊາ ໄດ້ສົ່ງຄົນມາບອກ ນາອາ-
ມານ ວ່າ, "ຈົ່ງໄປອາບນໍ້າທີ່ແມ່ນໍ້າ ຢໍແດນ ເຈັດເທື່ອ ແລະເນື້ອໜັງຂອງທ່ານຈະສະອາດເປັນ
ປົກກະຕິ. [11]ແຕ່ ນາອາມານ ໃຈຮ້າຍ ແລະຍ່າງອອກໄປພ້ອມທັງຈົ່ມວ່າ, "ຂ້ອຍຄິດວ່າ ຢ່າງ
ນ້ອຍເພິ່ນຕ້ອງອອກມາພົບຂ້ອຍ ແລ້ວອ້ອນວອນຫາ ພຣະຜູ້ເປັນເຈົ້າຂອງເພິ່ນ ໂດຍວາງມືໃສ່
ເທິງບ່ອນທີ່ເປັນພະຍາດໃຫ້ເຮົາດີຊັ້ນດອກ. [12]ຕາມຈິງແລ້ວແມ່ນໍ້າ ອາບານາ ແລະແມ່ນໍ້າ ຟາ-
ປາທີ່ເມືອງ ດາມາເຊ ຍັງດີກວ່າແມ່ນໍ້າໃນ ອິສຣາເອນນີ້ ເຮົາໄປອາບໃນແມ່ນໍ້າເຫລົ່ານັ້ນກໍຄົງ
ຈະຫາຍດີຢູ່ຕີ" ແລ້ວລາວກໍຫັນຫລັງຄືນໄປດ້ວຍຄວາມໂກດຮ້າຍ. [13]ແຕ່ພວກຂ້າໃຊ້ຂອງເພິ່ນ
ເຂົ້າມາເວົ້າກັບເພິ່ນວ່າ, "ຍາພໍ່ເອີຍ ຖ້າຫາກວ່າ ຜູ້ປະກາດພຣະຄຳສັ່ງໃຫ້ທ່ານເຮັດສິ່ງທີ່ຍາກ
ທ່ານກໍຄວນເຮັດແຕ່ດຽວນີ້ ເພິ່ນບອກໃຫ້ທ່ານພຽງແຕ່ໄປອາບນໍ້າ ແລ້ວທ່ານກໍຈະສະອາດ
ແລະດີພະຍາດ ເປັນຫຍັງທ່ານຈຶ່ງບໍ່ເຮັດ." [14]ດັ່ງນັ້ນ ນາອາມານ ຈຶ່ງລົງໄປແຊ່ໃນແມ່ນໍ້າຢໍ-

ແດນ ເຈັດເທື່ອຕາມທີ່ ເອລີຊາ ໄດ້ບອກ ແລ້ວເນື້ອໜັງຂອງ ເພິ່ນຈຶ່ງສະອາດ ເປັນປົກກະຕິຄືກັບ
ເນື້ອໜັງຂອງເດັກນ້ອຍ.
[15]ແລ້ວ ນາອາມານ ພ້ອມທັງພວກຕິດຕາມທຸກຄົນກໍກັບຄືນໄປຫາ ເອລີຊາ ແລ້ວເວົ້າວ່າ,
"ດຽວນີ້ ຂ້າພະເຈົ້າຮູ້ແລ້ວວ່າ ບໍ່ມີພຣະເຈົ້າອົງອື່ນ ນອກຈາກ ພຣະເຈົ້າຂອງ ອິສຣາເອນ ບັດນີ້
ຂໍທ່ານຈົ່ງຮັບ ເອົາຂອງຂວັນ ຈາກຂ້າພະເຈົ້າດ້ວຍ ເຖີດ." [16]ແຕ່ ເອລີຊາ ຕອບວ່າ, "ດ້ວຍພຣະ-
ນາມຂອງ ພຣະເຈົ້າ ຜູ້ຊົງພຣະຊົນຢູ່ ຜູ້ຊຶ່ງຂ້າພະເຈົ້າກຳລັງຮັບໃຊ້ຢູ່ ຂ້າພະເຈົ້າຈະບໍ່ຍອມຮັບ
ເອົາຂອງສິ່ງໃດໝົດ." ສ່ວນ ນາອາມານ ກໍຊູ້ງວເຂັນໃຫ້ເພິ່ນຍອມຮັບເອົາ ແຕ່ເພິ່ນກໍປະຕິເສດ.
[17]ແລ້ວ ນາອາມານ ຈຶ່ງເວົ້າວ່າ, "ຖ້າທ່ານບໍ່ຍອມຮັບ ເອົາຂອງຂວັນຈາກຂ້າພະເຈົ້າ ຂໍອະນຸຍາດ
ໃຫ້ຂ້າພະເຈົ້າເອົາດິນຈາກທີ່ນີ້ເມືອບ້ານນຳໃຫ້ພໍດີກັບລໍສອງ ໂຕບັນທຸກໄດ້ ເພາະວ່າ ຂ້າພະເຈົ້າ
ຈະບໍ່ຖວາຍເຄື່ອງເຜົາບູຊາ ຫລືການບູຊາໃດແກ່ພຣະອົງອື່ນນອກຈາກ ພຣະຜູ້ເປັນເຈົ້າ ເທົ່ານັ້ນ.
[18]ແລະຂ້າພະເຈົ້າຂໍພຽງຢ່າງດຽວຄື ເວລາທີ່ຂ້າພະເຈົ້າໄປນຳກະສັດເພື່ອນະມັດສະການພະ ຣິມ-
ໂມນ ຂອງຊີເຣຍນັ້ນ ຂໍ ພຣະຜູ້ເປັນເຈົ້າຊົງ ໂຜດອະໄພຂ້ານ້ອຍດ້ວຍ." [19]ເອລີຊາ ຕອບວ່າ, "ຂໍ
ທ່ານຈົ່ງໄປເປັນສຸກເທີ້ນ" ແລ້ວ ນາອາມານ ກໍຈາກໄປ.

## ຄົນໃຊ້ຂອງເອລີຊາເຮັດຜິດ

[20]ເມື່ອ ນາອາມານ ໄປບໍ່ໄດ້ໄກເທົ່າໃດ ເກຣາຊີ ຄົນໃຊ້ຂອງ ເອລີຊາ ກໍຄິດໃນໃຈວ່າ, "ເອີ
ນາຍຂອງ ເຮົາບໍ່ຍອມຮັບ ເອົາສິ່ງໃດທີ່ ນາອາມານ ຊາວ ອາຣາມ ຄົນນີ້ມອບໃຫ້ ແລະປ່ອຍໃຫ້
ລາວໄປລ້າໆ ເພິ່ນຄວນຍອມຮັບ ເອົາສິ່ງ ເຫລົ່ານີ້ ດ້ວຍພຣະນາມຂອງ ພຣະຜູ້ເປັນເຈົ້າ ຜູ້ຊົງ
ພຣະຊົນຢູ່ ເຮົາຈະຕ້ອງ ແລ່ນໄປເອົາບາງສິ່ງບາງຢ່າງນຳລາວໃຫ້ໄດ້." [21]ດັ່ງນັ້ນ ເກຣາຊີ ຈຶ່ງ
ແລ່ນຕິດຕາມ ນາອາມານ ໄປ ເມື່ອ ນາອາມານ ເຫັນລາວແລ່ນຕາມຫລັງມາ ເພິ່ນຈຶ່ງລົງຈາກລົດ
ມ້າມາພົບລາວ ແລະຖາມວ່າ, "ເຈົ້າຕາມມາຫຍັງນໍ?" [22]ເກຣາຊີ ຕອບວ່າ, "ທຸກສິ່ງຮຽບຮ້ອຍດີ
ແຕ່ນາຍຂອງຂ້ານ້ອຍໄດ້ສັ່ງຂ້ານ້ອຍມາບອກທ່ານວ່າ ຫວ່າງກີ້ນີ້ ມີຜູ້ປະກາດພຣະຄຳໜຸ່ມສອງ
ຄົນ ເດີນທາງມາຈາກພູ ເອຟຣາຢິມ ນາຍຂອງຂ້ານ້ອຍຢາກໃຫ້ທ່ານ ເອົາເງິນສາມພັນຫລຽນ
ກັບ ເຄື່ອງນຸ່ງສອງຊຸດ ໃຫ້ພວກນັ້ນ." [23]ນາອາມານ ຕອບວ່າ, "ຈົ່ງ ເອົາເງິນນີ້ໄປຫົກພັນຫລຽນ"
ເພິ່ນບອກໃຫ້ພວກເຂົາຟ້າວມັດເງິນໃສ່ຖົງສອງຖົງໄວ້ ແລະເອົາເສື້ອສອງຊຸດໃຫ້ ເພິ່ນສັ່ງໃຫ້ຄົນ
ໃຊ້ສອງຄົນຫາມໄປກ່ອນ ເກຣາຊີ. [24]ເມື່ອມາຮອດພູນ້ອຍບ່ອນທີ່ ເອລີຊາ ຢູ່ ລາວກໍເອົາຖົງເງິນ
ສອງຖົງໄປປະໄວ້ໃນເຮືອນ ແລະບອກໃຫ້ຄົນໃຊ້ຂອງ ນາອາມານ ກັບຄືນເມືອ.
[25]ເມື່ອ ເກຣາຊີ ເຂົ້າໄປໃນເຮືອນ ເອລີຊາ ໄດ້ຖາມລາວວ່າ, "ເກຣາຊີ ມື້ກີ້ນີ້ເຈົ້າໄປໃສມາ?
ເກຣາຊີ ຕອບວ່າ, "ບໍ່ໄດ້ໄປໃສ." [26]ແຕ່ ເອລີຊາ ເວົ້າກັບລາວວ່າ, "ເວລາຊາຍນັ້ນລົງຈາກລົດມ້າ
ມາຫາເຈົ້າ ຈິດວິນຍານຂອງຂ້ອຍກໍຢູ່ທີ່ນັ້ນ ດຽວນີ້ເຈົ້າໄດ້ເອົາເງິນນຳຜູ້ນັ້ນ ເຈົ້າອາດຊື້ສວນ
ໝາກກອກເທດ ຊື້ແກະຊື້ງົວ ແລະທາດໃຊ້ຍິງຊາຍ. [27]ແຕ່ວ່າ ພະຍາດຂີ້ທູດຂອງ ນາອາມານ
ຈະຕິດແປດເຈົ້າ ແລະຕິດແປດເຊື້ອສາຍຂອງເຈົ້າຕະຫລອດໄປ". ເກຣາຊີ ໄດ້ໜີຈາກ ເອລີຊາ
ໄປໂດຍມີພະຍາດຂີ້ທູດຂາວດັ່ງນວນຝ້າຍເຕັມຮ່າງກາຍ.

# ບົດທີ 6

## ເອລີຊາເຮັດໃຫ້ຂວານຕົກນໍ້າຟູຂຶ້ນມາ

1ພວກຜູ້ປະກາດພຣະຄຳໃນຄະນະຂອງ ເອລີຊາ ໄດ້ຈົ່ມຕໍ່ເພິ່ນວ່າ, "ບ່ອນຂອງພວກເຂົານີ້
ຄັບແຄບເກີນໄປ 2ສະນັ້ນ ຂໍອະນຸຍາດໃຫ້ພວກເຂົາຕັດໄມ້ທີ່ແມ່ນໍ້າຢໍແດນ ເພື່ອສ້າງທີ່ຢູ່ອາໄສ
ຢູ່ບ່ອນນັ້ນ" ເອລີຊາຕອບວ່າ, "ໄປແມ." 3ຜູ້ໜຶ່ງໃນຈຳນວນພວກເຂົາໄດ້ຂໍຮ້ອງໃຫ້ເອລີຊາໄປ
ນຳ ເພິ່ນກໍຕົກລົງໄປນຳພວກເຂົາ 4ເມື່ອໄປຮອດແມ່ນໍ້າຢໍແດນ ພວກເຂົາໄດ້ເລີ່ມຕົ້ນລົງມືເຮັດ
ວຽກ. 5ຄົນໜຶ່ງໃນໝູ່ພວກເຂົາໄດ້ຕັດໄມ້ ທັນໃດນັ້ນ ຂວານເຫລັກຂອງລາວໄດ້ຫລ່ອນຕົກລົງ
ນໍ້າ ລາວຈຶ່ງຮ້ອງຫາເອລີຊາວ່າ, "ນາຍເອີຍ ຂວານຕົກນໍ້າແລ້ວ ຈະໃຫ້ຂ້ານ້ອຍເຮັດແນວໃດ
ເພາະຂວານນັ້ນ ຂ້ານ້ອຍໄດ້ຢືມເຂົາມາຊໍ້າ" 6ເອລີຊາຈຶ່ງຖາມລາວວ່າ, "ຂວານນັ້ນຕົກຢູ່ໃສ?"
ລາວໄດ້ຊີ້ບອກບ່ອນຂວານຕົກໃຫ້ເພິ່ນເບິ່ງ ແລ້ວເອລີຊາໄດ້ຕັດໄມ້ທ່ອນໜຶ່ງຖິ້ມລົງໃນບ່ອນນັ້ນ
ແລ້ວຂວານດວງນັ້ນກໍຟູຂຶ້ນມາ. 7ເພິ່ນໄດ້ບອກລາວວ່າ, "ໄປເອົາແມ" ຊາຍຄົນນັ້ນຈຶ່ງຍື້ມືໄປຈັບ
ເອົາມາ.

## ເອລີຊາກັບກອງທັບຊີເຣຍ

8ເມື່ອເຈົ້າຊີວິດແຫ່ງຊີເຣຍອອກໄປສູ້ຮົບພວກອິສຣາເອນ ພະອົງໄດ້ປະຊຸມກັບພວກຂ້າລາ-
ຊະການຂອງພະອົງ ແລະໄດ້ເລືອກເອົາບ່ອນໜຶ່ງເປັນບ່ອນຕັ້ງຄ້າຍໄວ້. 9ແຕ່ເອລີຊາໄດ້ສົ່ງ
ຂ່າວໄປບອກເຈົ້າຊີວິດອິສຣາເອນໃຫ້ລະວັງຕົວ ບໍ່ໃຫ້ພະອົງຜ່ານໄປໃກ້ທາງນັ້ນ ເພາະວ່າພວກ
ຊີເຣຍໄດ້ຕັ້ງກອງທັບດັກສະກັດຢູ່ທີ່ນັ້ນ. 10ດັ່ງນັ້ນ ເຈົ້າຊີວິດອິສຣາເອນຈຶ່ງເຕືອນທະຫານໃຫ້
ລະມັດລະວັງຕົວຢູ່ສະເໝີ ການລະວັງຕົວຢ່າງນີ້ໄດ້ມີມາສອງສາມເທື່ອແລ້ວ. 11ຝ່າຍເຈົ້າຊີວິດ
ຊີເຣຍມີຈິດໃຈກະວົນກະວາຍໃນເລື່ອງນີ້ ພະອົງຈຶ່ງເອີ້ນເອົາບັນດານາຍທະຫານມາຖາມວ່າ,
"ຈົ່ງບອກເຮົາມາເບິ່ງວ່າໃນພວກເຈົ້າແມ່ນໃຜເຂົ້າຂ້າງເຈົ້າຊີວິດແຫ່ງອິສຣາເອນແດ່?" 12ນາຍ
ທະຫານຜູ້ໜຶ່ງຈຶ່ງຕອບຂຶ້ນວ່າ, "ຂ້າແດ່ພະອົງ ບໍ່ມີໃຜດອກ ເລື່ອງນີ້ເປັນເພາະຜູ້ປະກາດພຣະ-
ຄຳ ເອລີຊາ ໄດ້ລາຍງານຄວາມລັບທີ່ພະອົງເວົ້າໃນຫ້ອງນອນທັງໝົດຕໍ່ເຈົ້າຊີວິດແຫ່ງອິສຣາ-
ເອນ." 13ເຈົ້າຊີວິດຈຶ່ງສັ່ງວ່າ, "ຈົ່ງໄປຊອກຫາບ່ອນລາວຢູ່ ແລະຂ້ອຍຈະສົ່ງຄົນໄປຈັບລາວມາ"
ຕໍ່ມາ ມີຄົນມາບອກເພິ່ນວ່າ ເອລີຊາຢູ່ເມືອງໂດທານ. 14ດັ່ງນັ້ນ ພະອົງຈຶ່ງໄດ້ຈັດເອົາມ້າ ລົດ
ຮົບພ້ອມທັງກຳລັງພົນອອກໄປ ພວກເຂົາໄດ້ໄປຮອດທີ່ນັ້ນໃນເວລາກາງຄືນ ແລະໄດ້ອ້ອມ
ເມືອງໄວ້.

15ມື້ຕໍ່ມາ ຄົນໃຊ້ຂອງເອລີຊາກໍໄດ້ລຸກຂຶ້ນແຕ່ເຊົ້າ ແລະຍ່າງອອກໄປຂ້າງນອກ ລາວໄດ້
ເຫັນກຳລັງທະຫານຊີເຣຍພ້ອມດ້ວຍຝູງມ້າ ແລະລົດຮົບລ້ອມເມືອງຢູ່ ລາວຈຶ່ງຟ້າວມາຫາເອລີ-
ຊາ ແລະຮ້ອງຂຶ້ນວ່າ, "ຕາຍແລ້ວ ເຈົ້ານາຍ! ພວກເຮົາຖືກອ້ອມແລ້ວ ພວກເຮົາຊິເຮັດຈັ່ງໃດ
ດີ?" 16ເອລີຊາຕອບວ່າ, "ບໍ່ຕ້ອງຢ້ານດອກ ເພາະຝ່າຍເຮົາມີຫລາຍກວ່າຝ່າຍເຂົາ." 17ແລ້ວ
ເອລີຊາກໍອ້ອນວອນຕໍ່ພຣະຜູ້ເປັນເຈົ້າວ່າ, "ຂ້າແດ່ພຣະຜູ້ເປັນເຈົ້າ ຂໍພຣະອົງຊົງເປີດຕາຂ້າ
ໃຊ້ຂອງຂ້ານ້ອຍຜູ້ນີ້ໃຫ້ເຫັນກຳລັງຂອງຝ່າຍເຮົາແດ່ທ້ອນ" ພຣະຜູ້ເປັນເຈົ້າຈຶ່ງຊົງບັນດານໃຫ້
ຄົນໃຊ້ເຫັນ ລາວໄດ້ເຫັນຝູງມ້າ ລົດຮົບໄຟເຕັມຢູ່ເທິງພູ ກຳລັງລ້ອມເອລີຊາຢູ່. 18ໃນຂະນະທີ່

ພວກຊີເຣຍໂຈມຕີເມືອງນັ້ນ ເອລີຊາໄດ້ອ້ອນວອນຫາພຣະຜູ້ເປັນເຈົ້າວ່າ, "ຂ້ານ້ອຍຂໍຮ້ອງໃຫ້
ພຣະອົງຊົງບັງຕາພວກເຫລົ່ານີ້ແດ່ທ້ອນ" ພຣະອົງຈຶ່ງຊົງບັງຕາພວກເຂົາຕາມຄຳຮ້ອງຂໍຂອງ
ເອລີຊາ. 19ເອລີຊາໄດ້ໄປຫາພວກເຂົາ ແລະເວົ້າວ່າ, "ພວກເຈົ້າມາຜິດທາງແລ້ວ ອັນນີ້ບໍ່ແມ່ນ
ເມືອງທີ່ພວກເຈົ້າຊອກຫາ ຈົ່ງຕາມຂ້ອຍມາ ຂ້ອຍຈະພາພວກເຈົ້າໄປຊອກຫາຊາຍທີ່ພວກເຈົ້າ
ຊອກຫານັ້ນ ແລ້ວເອລີຊາໄດ້ພາພວກເຂົາໄປເມືອງຊາມາເຣຍ.
20ເມື່ອເຂົ້າໄປໃນເມືອງຊາມາເຣຍ ເອລີຊາກໍອ້ອນວອນຕໍ່ພຣະເຈົ້າວ່າ, "ຂ້າແດ່ພຣະຜູ້-
ເປັນເຈົ້າ ຂໍພຣະອົງຊົງເປີດຕາພວກເຂົາໃຫ້ເຫັນເທີ້ນ" ພຣະຜູ້ເປັນເຈົ້າຊົງເປີດຕາໃຫ້ພວກເຂົາ
ເຫັນຮຸ່ງ ແລະພວກເຂົາຈຶ່ງເຫັນວ່າ ພວກຕົນໄດ້ຢູ່ໃນກຸງຊາມາເຣຍເສຍແລ້ວ." 21ເມື່ອເຈົ້າຊີວິດ
ອິສຣາເອນເຫັນພວກເຂົາ ພະອົງຈຶ່ງຖາມເອລີຊາວ່າ, "ຍາພໍ່ເອີຍ! ໃຫ້ຂ້າພະເຈົ້າຂ້າພວກເຂົາ
ບໍ?" 22ເພິ່ນຕອບວ່າ, "ຂໍພະອົງຢ່າຊົງຂ້າພວກເຂົາເລີຍ ແມ່ນແຕ່ພວກຊະເລີຍທີ່ພະອົງຊົງຈັບ
ມາດ້ວຍຕົນເອງ ພຣະອົງກໍບໍ່ຕ້ອງຂ້າພວກເຂົາ ຂໍພະອົງເອົາເຂົ້າຈີ່ ແລະນໍ້າໃຫ້ພວກເຂົາກິນ
ແລ້ວປ່ອຍໃຫ້ພວກເຂົາກັບໄປຫາເຈົ້ານາຍຂອງພວກເຂົາສາ." 23ດັ່ງນັ້ນ ເຈົ້າຊີວິດຈຶ່ງຈັດງານ
ກິນລ້ຽງອັນຍິ່ງໃຫຍ່ຂຶ້ນ ເມື່ອພວກເຂົາກິນ ແລະດື່ມສິ້ນສຸດລົງແລ້ວ ພະອົງກໍສົ່ງພວກເຂົາ
ຫລົບຄືນເມືອ ຫລັງຈາກທີ່ພວກເຂົາກັບຄືນເມືອຫາເຈົ້າຊີວິດແຫ່ງຊີເຣຍແລ້ວ ນັບຕັ້ງແຕ່ນັ້ນມາ
ພວກຊີເຣຍກໍບໍ່ໄດ້ປຸ້ນຊິງເອົາເຂດແດນອິສຣາເອນອີກເລີຍ.

## ກອງທັບຊີເຣຍອ້ອມເມືອງຊາມາເຣຍ

24ແລະຢູ່ມາພາຍຫລັງເຫດການນັ້ນ ເບັນຮາດັດກະສັດຂອງຊີເຣຍໄດ້ຈັດກອງທັບທັງໝົດ
ຂອງຕົນແລ້ວໄດ້ສະເດັດຂຶ້ນໄປອ້ອມເມືອງຊາມາເຣຍ 25ມີການອຶດຢາກອາຫານຢ່າງໜັກໃນ
ເມືອງຊາມາເຣຍ ແລະເບິ່ງແມ ຂະນະທີ່ພວກເຂົາປິດອ້ອມຢູ່ນັ້ນ ຫົວລາໂຕໜຶ່ງ ພວກເຂົາຂາຍ
ແປດສິບຫລຽນ ແລະຂີ້ນົກກາງແກກະປ໋ອງໜຶ່ງຂາຍຫ້າຫລຽນ.
26ຂະນະທີ່ກະສັດຂອງອິສຣາເອນຜ່ານໄປເທິງກຳແພງ ມີຜູ້ຍິງຄົນໜຶ່ງຮ້ອງທູນພະອົງວ່າ
"ຂ້າແດ່ກະສັດ ເຈົ້ານາຍຂອງຂ້າພະອົງ ຂໍຊ່ວຍຂ້ານ້ອຍເທີ້ນ" 27ພະອົງກ່າວວ່າ "ຖ້າພຣະຜູ້-
ເປັນເຈົ້າບໍ່ໄດ້ຊ່ວຍເຈົ້າ ເຮົາຈະຊ່ວຍເຈົ້າໄດ້ຢ່າງໃດ ຈາກລານນວດເຂົ້າ ຫລືຈາກອ່າງບີບນໍ້າ
ອະງຸ່ນກໍບໍໄດ້?" 28ແລະກະສັດໄດ້ຖາມນາງວ່າ "ເຈົ້າເປັນຫຍັງໄປ" ນາງທູນຕອບວ່າ "ຍິງຄົນ
ນັ້ນໄດ້ບອກຂ້ານ້ອຍວ່າ 'ເອົາລູກຊາຍຂອງເຈົ້າມາ ແລະເຮົາທັງສອງຈົ່ງກິນມັນໃນມື້ນີ້ສາ ແລະ
ລູກຊາຍຂອງຂ້ອຍກິນມັນໃນມື້ອື່ນ' 29ພວກຂ້ານ້ອຍຈຶ່ງຕົ້ມລູກຊາຍຂອງຂ້ານ້ອຍ ແລະກິນ
ແລະເຊົ້າມື້ໜ້າມາຂ້ານ້ອຍໄດ້ບອກກັບຍິງຄົນນັ້ນວ່າ 'ຈົ່ງເອົາລູກຊາຍຂອງເຈົ້າມາ ແລະເຮົາຈະ
ກິນມັນ' ແລະຍິງຄົນນັ້ນເອົາລູກຊາຍຂອງລາວໄປເຊື່ອງໄວ້" 30ເມື່ອກະສັດໄດ້ຍິນຖ້ອຍຄຳຂອງ
ຍິງນັ້ນ ພະອົງກໍໄດ້ຈີກເສື້ອຜ້າຂອງຕົນ ພະອົງກຳລັງຢູ່ເທິງກຳແພງນັ້ນ ປະຊາຊົນກໍເບິ່ງ ເບິ່ງ
ແມ ພະອົງນຸ່ງຫົ່ມຜ້າກະສອບທີ່ຕົວຕົນເອງ 31ພະອົງກ່າວວ່າ "ຖ້າຫົວຂອງເອລີຊາລູກຊາຟາດ
ຍັງຢູ່ເທິງບ່າຂອງລາວໃນມື້ນີ້ ກໍຂໍພຣະເຈົ້າລົງໂທດເຮົາ ແລະໃຫ້ຫລາຍກວ່ານັ້ນອີກ."

## ເບັນຮາດັດຫາໂອກາດຂ້າເອລີຊາ

32ແຕ່ເອລີຊາໄດ້ນັ່ງຢູ່ໃນເຮືອນຂອງຕົນ ແລະພວກຜູ້ໃຫຍ່ກໍນັ່ງຢູ່ນຳ ກະສັດໄດ້ໃຊ້ຄົນໄປ

ກ່ອນໜ້າພະອົງ, ກ່ອນທີ່ຜູ້ສົ່ງຂ່າວຈະມາເຖິງ ເອລີຊາກໍເວົ້າກັບພວກຜູ້ໃຫຍ່ວ່າ “ທ່ານທັງ-
ຫລາຍເຫັນຫລືບໍ່ ລູກຊາຍຂອງຜູ້ຂ້າຄົນນັ້ນໄດ້ໃຊ້ຄົນມາເອົາຫົວຂອງຂ້າພະເຈົ້າ ເບິ່ງແມ ເມື່ອ
ຜູ້ສົ່ງຂ່າວມາຈົ່ງງັບປະຕູ ແລະອັດປະຕູໃຫ້ແໜ້ນຂັງລາວໄວ້ ສຽງຕີນຂອງນາຍຂອງລາວກໍຕາມ
ພວກເຂົາມາບໍ່ແມ່ນບໍ?” 33ຂະນະທີ່ເພິ່ນຍັງເວົ້າກັບພວກເຂົາຢູ່ ເບິ່ງແມ ຜູ້ສົ່ງຂ່າວກໍລົງມາຫາ
ເພິ່ນ ແລະກ່າວວ່າ “ເຫດຮ້າຍນີ້ມາຈາກພຣະຜູ້ເປັນເຈົ້າ ຂ້າພະເຈົ້າຈະລໍຖ້າພຣະຜູ້ເປັນເຈົ້າ
ອີກຕໍ່ໄປເຮັດຫຍັງ.”

# ບົດທີ 7

## ເອລີຊາ ຜູ້ທຳນວາຍວ່າຈະມີອາຫານພຽງພໍ

1ແຕ່ເອລີຊາທູນວ່າ “ຂໍຊົງຟັງພຣະທຳຂອງພຣະຜູ້ເປັນເຈົ້າ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ
ມື້ອື່ນປະມານເວລານີ້ ແປ້ງທີ່ລະອຽດ ຖັງໜຶ່ງເຂົາຈະຂາຍໜຶ່ງເຊເຂ ແລະເຂົ້າເດືອຍ[ກ] ສອງ
ຖັງ ໜຶ່ງເຊເຂຢູ່ທີ່ປະຕູເມືອງຊາມາເຣຍ” 2ແລ້ວນາຍທະຫານຄົນສະນິດຂອງກະສັດຕອບຄົນ
ຂອງພຣະເຈົ້າວ່າ “ຖ້າແມ່ນພຣະຜູ້ເປັນເຈົ້າໄດ້ສ້າງປ່ອງຢ້ຽມໃນຟ້າສະຫວັນ ສິ່ງນີ້ຈະເປັນຂຶ້ນ
ໄດ້ບໍ?“ ແຕ່ເອລີຊາບອກວ່າ “ທ່ານຈະເຫັນກັບຕາຂອງທ່ານເອງ ແຕ່ທ່ານຈະບໍ່ໄດ້ກິນ.”
3ຢູ່ທີ່ທາງເຂົ້າປະຕູເມືອງມີຄົນຂີ້ທູດສີ່ຄົນ ພວກເຂົາເວົ້າກັນວ່າ “ເຮົາຈະນັ່ງບ່ອນນີ້ຈົນຕາຍ
ເຮັດຫຍັງ 4ຖ້າພວກເຮົາເວົ້າວ່າ ‘ໃຫ້ເຮົາເຂົ້າໄປໃນເມືອງ’ ການອຶດຢາກອາຫານກໍຢູ່ໃນເມືອງ
ແລະພວກເຮົາກໍຈະຕາຍຢູ່ ບ່ອນນັ້ນ ແລະຖ້າເຮົານັ່ງຢູ່ບ່ອນນີ້ເຮົາກໍຕາຍຄືກັນ ສະນັ້ນ ມາແມ
ໃຫ້ເຮົາເຂົ້າໄປໃນກອງທັບຂອງຄົນຊີເຣຍ ຖ້າພວກເຂົາໄວ້ຊີວິດຂອງພວກເຮົາ ພວກເຮົາກໍຈະ
ລອດຕາຍ ຖ້າພວກເຂົາຂ້າເຮົາ ກໍຕາຍເທົ່ານັ້ນເອງ.”

## ພຣະເຈົ້າໄດ້ເຮັດໃຫ້ຄົນຊີເຣຍຕົກໃຈແລ້ວໜີໄປ

5ດັ່ງນັ້ນ ພວກເຂົາຈຶ່ງລຸກຂຶ້ນໃນເວລາມືດໆເພື່ອຈະໄປໃນຄ້າຍຂອງຄົນຊີເຣຍ ແຕ່ເມື່ອພວກ
ເຂົາມາເຖິງເຂດແດນຄ້າຍຂອງຄົນຊີເຣຍແລ້ວ; ເບິ່ງແມ ບໍ່ມີໃຜຢູ່ໃນບ່ອນນັ້ນຈັກຄົນ 6ເພາະ
ພຣະຜູ້ເປັນເຈົ້າໄດ້ເຮັດໃຫ້ກອງທັບຂອງຄົນຊີເຣຍໄດ້ຍິນສຽງລົດຮົບ ສຽງມ້າ ແລະສຽງກອງ-
ທັບອັນໃຫຍ່ພວກເຂົາຈຶ່ງເວົ້າກັນວ່າ “ກະສັດຂອງອິສຣາເອນໄດ້ຈ້າງບັນດາກະສັດຂອງຄົນ
ຮິດຕີ ແລະບັນດາກະສັດຂອງເອຢິບມາສູ້ຮົບກັບພວກເຮົາແລ້ວ” 7ພວກເຂົາຈຶ່ງລຸກຂຶ້ນໜີໄປໃນ
ເວລາຄໍ່າມືດ ແລະພວກເຂົາໄດ້ປະຖິ້ມເຕັນ, ມ້າ ແລະລາຂອງພວກເຂົາ ປະຖິ້ມຄ້າຍໄວ້ຢ່າງ
ນັ້ນ ແລະໜີໄປເອົາຊີວິດໃຫ້ລອດ 8ແລະເມື່ອຄົນຂີ້ທູດເຫລົ່ານີ້ມາເຖິງເຂດແດນຄ້າຍ ແລະ
ພວກເຂົາກໍເຂົ້າໄປໃນເຕັນຫລັງໜຶ່ງ ກິນ ແລະດື່ມ ແລະຂົນເງິນ ຄຳ ແລະເສື້ອຜ້າເອົາໄປ
ເຊື່ອງໄວ້ ແລ້ວພວກເຂົາກໍກັບເຂົ້າໄປໃນເຕັນໜຶ່ງອີກ ຂົນເອົາເຄື່ອງຂອງອອກໄປຈາກບ່ອນນັ້ນ
ເອົາໄປເຊື່ອງໄວ້ 9ແລ້ວພວກເຂົາເວົ້າກັນວ່າ “ພວກເຮົາເຮັດບໍ່ຖືກແລ້ວມື້ນີ້ເປັນມື້ຂ່າວດີ ຖ້າເຮົາ
ມິດຢູ່ ແລະຄອຍຖ້າຈົນຕາເວັນຂຶ້ນ ໃນຍາມເຊົ້າ ໂທດຈະຕົກຢູ່ກັບເຮົາ ເພາະສະນັ້ນ ມາແມ
ໃຫ້ເຮົາໄປບອກສຳນັກພະລາຊະວັງ” 10ພວກເຂົາຈຶ່ງເອີ້ນພວກເຝົ້າປະຕູເມືອງ ແລະບອກເລື່ອງ

[ກ]ເຂົ້າບາເລ

ລາວແກ່ພວກເຂົາວ່າ "ເຮົາມາຈາກຄ້າຍຂອງຄົນຊີເຣຍ ແລະ ເຮົາບໍ່ເຫັນໃຜ ແລະບໍ່ໄດ້ຍິນສຽງ
ຜູ້ໃດໃນບ່ອນນັ້ນ ມີແຕ່ມ້າມັດຢູ່ ແລະລາຜູກຢູ່ ແລະເຕັນຕັ້ງຢູ່ຢ່າງນັ້ນຄືແຕ່ກ່ອນ [11]ແລ້ວເຂົາ
ບອກແກ່ພວກເຝົ້າປະຕູ ແລະພວກເຂົາກໍບອກກັນໄປເຖິງພາຍໃນສຳນັກພະລາຊະວັງກະສັດ.
[12]ກະສັດກໍໄດ້ຕື່ນຂຶ້ນໃນກາງຄືນ ແລະກ່າວກັບຂ້າລາຊະການວ່າ "ເຮົາຈະບອກໃຫ້ວ່າຄົນຊີ-
ເຣຍຕຽມສູ້ຮົບເຮົາຢ່າງໃດ ພວກເຂົາທັງຫລາຍຮູ້ຢູ່ວ່າພວກເຮົາຫິວເຂົ້າ ຈຶ່ງອອກໄປລີ້ຕົວຢູ່ນອກ
ຄ້າຍຢູ່ກາງທົ່ງນາຄິດວ່າ 'ເມື່ອພວກເຂົາອອກມາຈາກໃນເມືອງ ເຮົາຈະຈັບພວກເຂົາທັງເປັນ
ແລ້ວຈະເຂົ້າໄປໃນເມືອງ" [13]ແລະຂ້າລາຊະການຄົນໜຶ່ງທູນວ່າ "ຂໍສັ່ງໃຫ້ຄົນເອົາມ້າທີ່ເຫລືອຢູ່
ໃນເມືອງຈັກຫ້າໂຕ (ເບິ່ງແມ ບາງທີມ້າເຫລົ່ານັ້ນຈະຍັງເປັນຢູ່ຄືຄົນອິສຣາເອນທີ່ເຫລືອຢູ່ໃນ
ເມືອງ ຫລືຈະເປັນຄືຄົນອິສຣາເອນທີ່ໄດ້ຈິບຫາຍແລ້ວກໍຊ່າງເຖີດ) ຂໍໃຫ້ເຮົາສົ່ງຄົນໄປເບິ່ງ"
[14]ພວກເຂົາຈຶ່ງເອົາລົດຮົບສອງຄັນພ້ອມກັບມ້າ ແລະກະສັດໄດ້ສົ່ງໃຫ້ໄປຕິດຕາມກອງທັບຂອງ
ຄົນຊີເຣຍ ໂດຍກ່າວວ່າ "ຈົ່ງໄປເບິ່ງ" [15]ພວກເຂົາຈຶ່ງຕິດຕາມໄປຈົນຮອດແມ່ນໍ້າຢໍແດນ ແລະ
ຕະຫລອດທາງມີເສື້ອຜ້າ ແລະເຄື່ອງໃຊ້ຊຶ່ງຄົນຊີເຣຍປະຖິ້ມ ເມື່ອພວກເຂົາຟ້າວໜີໄປ ຜູ້ສົ່ງ
ຂ່າວກໍກັບມາທູນກະສັດ.

## ຄຳຂອງຜູ້ທຳນວາຍເລື່ອງອາຫານກໍສຳເລັດ

[16]ແລ້ວປະຊາຊົນກໍຍົກທັບອອກໄປປຸ້ນຄ້າຍຂອງຄົນຊີເຣຍ ຍອດແປ້ງຈຶ່ງຂາຍກັນຖັງລະໜຶ່ງ
ເຊເຂ ແລະເຂົ້າເດືອຍສອງຖັງຕໍ່ໜຶ່ງເຊເຂ ຕາມພຣະທຳຂອງ ພຣະຜູ້ເປັນເຈົ້າ.
[17]ຝ່າຍກະສັດໄດ້ແຕ່ງຕັ້ງນາຍທະຫານຄົນສະນິດໃຫ້ເປັນຜູ້ຮັກສາປະຕູ ແລະປະຊາຊົນໄດ້
ຢຽບເພິ່ນລົງທີ່ປະຕູ ຈົນເສຍຊີວິດ ຕາມທີ່ຄົນຂອງ ພຣະເຈົ້າ ໄດ້ກ່າວໄວ້ໃນມື້ທີ່ກະສັດສະເດັດ
ລົງມາຫາເພິ່ນ [18]ແລະເປັນໄປຕາມທີ່ຄົນຂອງ ພຣະເຈົ້າ ໄດ້ທູນກະສັດວ່າ "ເຂົ້າເດືອຍສອງຖັງ
ຂາຍໜຶ່ງເຊເຂ ແລະຍອດແປ້ງໜຶ່ງຖັງຂາຍໜຶ່ງເຊເຂ ປະມານເວລານີ້ໃນມື້ອື່ນຢູ່ທີ່ປະຕູເມືອງ
ຊາມາເຣຍ" [19]ແລະນາຍທະຫານຄົນສະນິດກໍໄດ້ຕອບຄົນຂອງ ພຣະເຈົ້າ ວ່າ "ຖ້າແມ່ນ ພຣະຜູ້-
ເປັນເຈົ້າ ໄດ້ສ້າງ ປ່ອງຢ້ຽມໃນຟ້າສະຫວັນ ສິ່ງນີ້ຈະເປັນຂຶ້ນໄດ້ບໍ?" ແລະເພິ່ນໄດ້ຕອບວ່າ
"ທ່ານຈະເຫັນກັບຕາຂອງທ່ານເອງ ແຕ່ຈະບໍ່ໄດ້ກິນ" [20]ແລະຢູ່ມາກໍບັງເກີດເປັນດັ່ງນັ້ນແກ່ລາວ
ເພາະປະຊາຊົນໄດ້ຢຽບລາວລົງທີ່ປະຕູເມືອງ ແລະລາວກໍໄດ້ເສຍຊີວິດ.

# ບົດທີ 8

## ເອລີຊາທຳນວາຍເຖິງການອຶດຢາກອາຫານເຈັດປີ

[1]ຝ່າຍ ເອລີຊາ ໄດ້ບອກກັບຍິງຄົນທີ່ເພິ່ນໄດ້ໃຫ້ລູກຊາຍຂອງນາງກັບຄືນມາຈາກຕາຍວ່າ "ຈົ່ງ
ລຸກຂຶ້ນແລະອອກໄປທັງຄອບຄົວຂອງເຈົ້າ ຈົ່ງໄປອາໄສຢູ່ບ່ອນໃດທີ່ເຈົ້າຈະອາໄສຢູ່ໄດ້ ເພາະ
ພຣະຜູ້ເປັນເຈົ້າ ໄດ້ເຮັດໃຫ້ເກີດຄວາມອຶດຢາກອາຫານ ແລະຈະເກີດຂຶ້ນໃນແຜ່ນດິນນີ້ລະ-
ຫວ່າງເຈັດປີ" [2]ຍິງຄົນນັ້ນກໍລຸກຂຶ້ນເຮັດຕາມຖ້ອຍຄຳຄົນຂອງ ພຣະເຈົ້າ ນາງໄດ້ຍ້າຍໜີອອກ
ໄປທັງຄອບຄົວຂອງນາງ ໄປອາໄສຢູ່ໃນແຜ່ນດິນ ຟີລິດສະຕິນ ເປັນເວລາເຈັດປີ [3]ແລະຢູ່ມາ
ເມື່ອຄົບເຈັດປີຖ້ວນແລ້ວ ຜູ້ຍິງຄົນນັ້ນກໍໄດ້ກັບມາຈາກແຜ່ນດິນ ຟີລິດສະຕິນ ແລະໄດ້ອອກໄປ

ທູນຕໍ່ກະສັດເພື່ອຂໍເຮືອນ ແລະທີ່ດິນຂອງນາງຄືນ 4ຝ່າຍກະສັດກຳລັງກ່າວກັບ ເກຮາຊີຄົນໃຊ້
ຂອງຄົນຂອງ ພຣະເຈົ້າ ຢູ່ວ່າ "ຈົ່ງບອກເຮົາເຖິງບັນດາກິດຈະການທີ່ ເອລີຊາ ໄດ້ເຮັດ" 5ເມື່ອ
ລາວກຳລັງທູນກະສັດ ເຖິງ ເລື່ອງທີ່ ເອລີຊາ ໄດ້ເອີ້ນຊີວິດຂອງ ເດັກນ້ອຍນັ້ນກັບຄືນມາຈາກຕາຍ
ຜູ້ຍິງຄົນທີ່ເພິ່ນໄດ້ໃຫ້ລູກຊາຍກັບຄືນມາຈາກຕາຍ ໄດ້ອຸທອນຕໍ່ກະສັດເພື່ອຂໍເຮືອນ ແລະທີ່ດິນ
ຂອງນາງຄືນ ແລະ ເກຮາຊີທູນວ່າ "ຂ້າແດ່ກະສັດ ເຈົ້ານາຍຂອງຂ້ານ້ອຍ ນີ້ເປັນຜູ້ຍິງຄົນນັ້ນ
ແລະຄົນນີ້ແຫລະເປັນລູກຊາຍຂອງນາງ ຊຶ່ງ ເອລີຊາ ໄດ້ເຮັດໃຫ້ກັບຄືນມາຈາກຕາຍ" 6ແລະ
ເມື່ອກະສັດກ່າວຖາມຜູ້ຍິງຄົນນັ້ນ ນາງກໍທູນເລື່ອງຕ່າງໆ, ກະສັດຈຶ່ງໄດ້ຕັ້ງເຈົ້າໜ້າທີ່ຄົນໜຶ່ງ
ໃຫ້ແກ່ນາງສັ່ງວ່າ "ຈົ່ງຈັດການຄືນທຸກສິ່ງທີ່ເປັນຂອງຂອງນາງພ້ອມທັງພືດຜົນຈາກນານັ້ນ ຕັ້ງ-
ແຕ່ມື້ທີ່ນາງອອກຈາກແຜ່ນດິນມາຈົນເຖິງບັດນີ້."

## ເອລີຊາຜູ້ທຳນວາຍກ່າວເຖິງການປົກຄອງຂອງຮາຊາເອນເໜືອຊີເຣຍ

7ຝ່າຍ ເອລີຊາ ມາເຖິງເມືອງ ດາມາເຊ, ເບັນຮາດັດ ກະສັດຂອງຊີເຣຍຊຶ່ງປ່ວຍຢູ່ ແລະເມື່ອມີ
ຄົນມາທູນວ່າ "ຄົນຂອງ ພຣະເຈົ້າ ມາບ່ອນນີ້" 8ກະສັດໄດ້ກ່າວກັບ ຮາຊາເອນ ວ່າ "ຈົ່ງນຳຂອງ-
ຂວັນໄປພົບຄົນຂອງ ພຣະເຈົ້າ ໃຫ້ທູນຖາມ ພຣະຜູ້ເປັນເຈົ້າ ໂດຍຖາມເພິ່ນວ່າ 'ຂ້າພະເຈົ້າຈະ
ຫາຍປ່ວຍບໍ'" 9ຮາຊາເອນ ຈຶ່ງໄປພົບເພິ່ນ ແລະນຳຂອງຂວັນໄປນຳ ຄື ສິນຄ້າຢ່າງດີທຸກຢ່າງ
ຂອງ ເມືອງ ດາມາເຊ ຄືອູດສີ່ສິບໂຕເມື່ອລາວມາຢືນຢູ່ຕໍ່ໜ້າເພິ່ນແລ້ວ ກ່າວວ່າ "ລູກຂອງທ່ານຄື
ເບັນຮາດັດ ກະສັດຂອງຊີເຣຍໄດ້ໃຊ້ຂ້າພະເຈົ້າມາຫາທ່ານ ກ່າວວ່າ 'ຂ້າພະເຈົ້າຈະຫາຍປ່ວຍ
ຫລືບໍ່'" 10ເອລີຊາ ໄດ້ຕອບລາວວ່າ "ຈົ່ງໄປທູນກະສັດວ່າ ທ່ານຈະຫາຍປ່ວຍ' ແຕ່ພຣະຜູ້ເປັນ-
ເຈົ້າ ໄດ້ສະແດງໃຫ້ຂ້າພະເຈົ້າເຫັນວ່າ ທ່ານຈະຕາຍແນ່ນອນ" 11ເພິ່ນກໍຈ້ອງເບິ່ງຕົວລາວຈົນ
ລາວອາຍ ແລະຄົນຂອງ ພຣະເຈົ້າ ໄດ້ຮ້ອງໄຫ້ 12ຝ່າຍ ຮາຊາເອນ ຖາມວ່າ "ເຫດໃດເຈົ້ານາຍ
ຂອງຂ້າພະເຈົ້າຈຶ່ງຮ້ອງໄຫ້" ເອລີຊາຕອບວ່າ "ເພາະຂ້ອຍຮູ້ເຖິງເຫດຮ້າຍທີ່ເຈົ້າຈະເຮັດຕໍ່ປະ-
ຊາຊົນ ອິສຣາເອນ ເຈົ້າຈະເອົາໄຟຈູດເມືອງທັງຫລາຍຂອງພວກເຂົາທີ່ມີກຳແພງ ແລະເຈົ້າຈະ
ຂ້າຄົນໜຸ່ມໆດ້ວຍດາບ ແລະປາດເດັກນ້ອຍໆລົງເປັນຕ່ອນໆ ແລະ ຜ່າທ້ອງຍິງແມ່ມານທັງ-
ຫລາຍຂອງພວກເຂົາ" 13ແລະ ຮາຊາເອນ ໄດ້ຕອບວ່າ "ຜູ້ຮັບໃຊ້ຂອງທ່ານຜູ້ເປັນແຕ່ພຽງໝາໂຕ
ໜຶ່ງ ເປັນໃຜທີ່ຈະເຮັດສິ່ງທີ່ໃຫຍ່ນີ້" ເອລີຊາ ຕອບວ່າ "ພຣະຜູ້ເປັນເຈົ້າ ໄດ້ສະແດງໃຫ້ຂ້ອຍ
ເຫັນວ່າ ທ່ານຈະເປັນກະສັດປົກຄອງປະເທດ ຊີເຣຍ" 14ແລະລາວໄດ້ຈາກ ເອລີຊາ ມາຫາເຈົ້າ
ນາຍຂອງຕົນຜູ້ຊຶ່ງຖາມລາວວ່າ "ເອລີຊາ ເວົ້າຢ່າງໃດກັບເຈົ້າແດ່" ແລະລາວຕອບວ່າ "ເພິ່ນໄດ້
ບອກວ່າທ່ານຈະຫາຍປ່ວຍແນ່ນອນ" 15ແລະຢູ່ມາ ເມື່ອຮຸ່ງເຊົ້າ ລາວກໍເອົາຜ້າປູບ່ອນນອນຈຸ່ມ
ນ້ຳປົກໜ້າເພິ່ນໄວ້ ເມື່ອເພິ່ນຕາຍ ແລະ ຮາຊາເອນກໍຂຶ້ນປົກຄອງແທນ.

## ເຢໂຮຣາມກັບເຢໂຮຊາຟັດປົກຄອງເໜືອຢູດາພ້ອມກັນ[ກ]

16ໃນປີທີຫ້າຂອງ ໂຢຮາມ ລູກຊາຍ ອາຮາບ ກະສັດຂອງ ອິສຣາເອນ ເຢໂຮຣາມ ລູກຊາຍ ເຢ-
ໂຮຊາຟັດ ກະສັດຂອງ ຢູດາ ໄດ້ເລີ່ມປົກຄອງ 17ເມື່ອພະອົງເລີ່ມປົກຄອງນັ້ນ ມີອາຍຸສາມສິບສອງ
ປີ ແລະພະອົງໄດ້ປົກຄອງໃນ ເຢຣູຊາເລັມ ແປດປີ 18ພະອົງໄດ້ດຳເນີນຕາມບັນດາກະສັດຂອງ

[ກ]2ຂຄວ 21:5 [ຂ]2ຂຄວ 21:19–20 [ຄ]2ຂຄວ 22:5

ອິສຣາເອນ ຕາມຢ່າງທີ່ຄອບຄົວອາຮາບໄດ້ເຮັດ ເພາະວ່າ ລູກສາວຂອງອາຮາບ ເປັນມະເຫສີ
ຂອງພະອົງ ແລະພະອົງໄດ້ເຮັດສິ່ງທີ່ຊົ່ວຮ້າຍໃນສາຍພຣະເນດຂອງ ພຣະຜູ້ເປັນເຈົ້າ [19]ຢ່າງໃດ
ກໍດີ ພຣະຜູ້ເປັນເຈົ້າ ຈະບໍ່ທຳລາຍ ຢູດາ ເພາະເຫັນແກ່ດາວິດຜູ້ຮັບໃຊ້ຂອງພຣະອົງເຫດທີ່ພຣະ-
ອົງໄດ້ກ່າວສັນຍາວ່າ ຈະປະທານຕະກຽງໃຫ້ແກ່ດາວິດ ແລະແກ່ລູກຊາຍຂອງເພິ່ນສືບໆໄປ
ເປັນນິດ.

[20]ໃນລັດຊະການຂອງພະອົງ ພວກເອໂດມໄດ້ກະບົດອອກຫ່າງຈາກການປົກຄອງຂອງພວກ
ຢູດາ ແລະໄດ້ຕັ້ງກະສັດອົງໜຶ່ງຂຶ້ນສຳລັບພວກເຂົາເອງ [21]ແລ້ວໂຢຣາມກໍສະເດັດໄປພ້ອມກັບ
ບັນດາລົດຮົບຂອງພະອົງຜ່ານໄປຮອດຊາອີ ເມື່ອຮອດກາງຄືນ ພະອົງກໍລຸກຂຶ້ນ ພະອົງ ແລະ
ຜູ້ບັນຊາການລົດຮົບກໍໂຈມຕີຄືນເອໂດມທີ່ມາອ້ອມພະອົງນັ້ນ ແຕ່ກອງທັບຂອງພະອົງໄດ້ປົບໜີ
ກັບບ້ານໄປ [22]ເອໂດມຈຶ່ງໄດ້ກະບົດອອກຫ່າງຈາກຂອງຢູດາຈົນຮອດທຸກມື້ນີ້ ແລ້ວເມືອງລິບ-
ນາກໍໄດ້ກະບົດໃນເວລາດຽວກັນນັ້ນ.

[23]ລາຊະກິດຕ່າງໆຂອງ ໂຢຣາມ ແລະບັນດາສິ່ງທີ່ພະອົງໄດ້ເຮັດກໍໄດ້ບັນທຶກໄວ້ໃນໜັງສື
ຂ່າວຄາວຂອງກະສັດຢູດາ.

## ເຢໂຮຣາມຕາຍ[ຂ]

[24]ໂຢຣາມຈຶ່ງໄດ້ລ່ວງລັບໄປຢູ່ກັບບັນພະບູລຸດຂອງຕົນ ແລະພວກເຂົາໄດ້ຝັງສົບພະອົງໄວ້
ກັບບັນພະບູລຸດຂອງພະອົງໃນເມືອງດາວິດ ແລະ ອາຮາຊີຢາ ລູກຊາຍຂອງພະອົງຂຶ້ນປົກຄອງ
ແທນ.

[25]ໃນ ປີ ທີ ສິບ ສອງ ຂອງ ລາຊະການ ໂຢຣາມ ລູກ ຊາຍ ຂອງ ອາຮາບ ກະສັດ ຂອງ ອິສຣາເອນ
ອາຮາຊີຢາ ລູກຊາຍ ເຢໂຮຣາມ ກະສັດຂອງຢູດາ ໄດ້ເລີ່ມຂຶ້ນປົກຄອງ [26]ເມື່ອ ອາຮາຊີຢາ ໄດ້
ເລີ່ມປົກຄອງນັ້ນ ລາວມີອາຍຸຊາວສອງປີ ແລະໄດ້ປົກຄອງໃນ ເຢຣູຊາເລັມ ໜຶ່ງປີ, ແມ່ຂອງ
ລາວຊື່ວ່າ ອາທາລີຢາ ນາງເປັນລູກສາວຂອງອົມຣີກະສັດແຫ່ງອິສຣາເອນ [27]ລາວໄດ້ດຳເນີນ
ຕາມລາຊະວົງຂອງ ອາຮາບ ຄືກັນ ແລະເຮັດສິ່ງທີ່ຊົ່ວຮ້າຍໃນສາຍພຣະເນດຂອງ ພຣະຜູ້ເປັນ-
ເຈົ້າ ເໝືອນດັ່ງຄອບຄົວຂອງອາຮາບ ໄດ້ເຮັດ ເພາະລາວເປັນລູກເຂີຍໃນລາຊະວົງຂອງ ອາ-
ຮາບ.

## ອາຮາຊີຢາຮ່ວມກັບເຢໂຮຣາມໃນການຕໍ່ສູ້ທີ່ຣາໂມດ-ກີເລອາດ[ຄ]

[28]ພະອົງໄດ້ສະເດັດກັບ ໂຢຣາມ ລູກຊາຍຂອງ ອາຮາບ ເພື່ອ ເຮັດສົງຄາມຕໍ່ສູ້ກັບ ຮາຊາເອນ
ກະສັດຂອງຊີເຣຍທີ່ຣາໂມດ-ກີເລອາດ ແລະຄົນຊີເຣຍໄດ້ເຮັດໃຫ້ໂຢຣາມບາດເຈັບ.

## ອາຮາຊີຢາສະເດັດໄປຢ້ຽມເຢໂຮຣາມທີ່ເຢດຊະເຣເອນ[ກ]

[29]ແລະກະສັດ ໂຢຣາມ ໄດ້ກັບມາຮັກສາຕົວຂອງພະອົງຢູ່ທີ່ ເຢດຊະເຣເອນ ເພາະຄົນຊີເຣຍ
ໄດ້ເຮັດໃຫ້ພະອົງບາດເຈັບທີ່ ຣາມາ ໃນເວລາທີ່ພະອົງຕໍ່ສູ້ກັນກັບຮາຊາເອນນັ້ນ, ກະສັດຂອງຊີ-
ເຣຍ ແລະ ອາຮາຊີຢາ ລູກຊາຍຂອງ ເຢໂຮຣາມກະສັດຂອງຢູດາ ໄດ້ລົງໄປຫາ ໂຢຣາມ ລູກຊາຍ
ຂອງອາຮາບ ໃນ ເຢດຊະເຣເອນ ເພາະວ່າພະອົງຍັງປ່ວຍຢູ່.

[ກ]2ຂຄວ 22:6

# ບົດທີ 9

## ເຢຮູໄດ້ຮັບການແຕ່ງຕັ້ງໃຫ້ເປັນກະສັດປົກຄອງອິສຣາເອນ

[1]ແລ້ວ ເອລີຊາຜູ້ທຳນວາຍໄດ້ເອີ້ນລູກຂອງຜູ້ທຳນວາຍມາຄົນໜຶ່ງ ແລະເວົ້າກັບລາວວ່າ “ຈົ່ງ
ຄາດ ແອວຂອງ ເຈົ້າໄວ້ ຖືນໍ້າມັນ ແກ້ວນີ້ໄປທີ່ ຣາໂມດ-ກີເລອາດ [2]ແລະ ເມື່ອ ເຈົ້າໄປ ເຖິງ ແລ້ວ
ຈະ ເຫັນ ເຢຮູ ລູກ ເຢໂຮຊາຟັດ ລູກ ນິມຊີ ຈົ່ງ ເຂົ້າ ໄປ ຫາ ລາວ ໃຫ້ລາວ ລຸກຂຶ້ນ ຈາກພວກໝູ່ນັ້ນ
ແລະນຳລາວເຂົ້າໄປໃນຫ້ອງຊັ້ນໃນ [3]ແລ້ວຈົ່ງເອົານໍ້າມັນໃນແກ້ວເທລົງເທິງຫົວຂອງລາວ ແລະ
ກ່າວວ່າ ‘ພຣະຜູ້ເປັນເຈົ້າ ກ່າວດັ່ງນີ້ວ່າ ເຮົາ ແຕ່ງຕັ້ງ ເຈົ້າ ໃຫ້ ເປັນກະສັດປົກຄອງ ອິສຣາເອນ’
ແລ້ວຈົ່ງເປີດປະຕູອອກໜີໄປຢ່າລໍຊ້າ.”

[4]ຄົນໜຸ່ມນັ້ນຄືຄົນໜຸ່ມທີ່ເປັນຜູ້ທຳນວາຍຈຶ່ງໄດ້ໄປຍັງ ຣາໂມດ-ກີເລອາດ [5]ເມື່ອລາວໄປຮອດ
ເບິ່ງແມ ບັນດາຜູ້ບັງຄັບບັນຊາທະຫານກຳລັງປະຊຸມກັນຢູ່ ແລະລາວກ່າວວ່າ “ຂ້າແດ່ຜູ້ບັນຊາ
ການ ຂ້າພະເຈົ້າມີວຽກດ່ວນມາເຖິງທ່ານ” ແລະ ເຢຮູ ເວົ້າວ່າ “ມາຫາຄົນໃດໃນພວກເຮົາ” ແລະ
ລາວຕອບວ່າ “ຂ້າແດ່ທ່ານຜູ້ບັນຊາການ ຂ້າພະເຈົ້າມາຫາທ່ານ” [6]ເພິ່ນກໍລຸກຂຶ້ນເຂົ້າໄປໃນ
ເຮືອນ ແລະຄົນໜຸ່ມນັ້ນກໍເທນໍ້າມັນເທິງຫົວຂອງເພິ່ນ ກ່າວວ່າ “ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງ
ອິສຣາເອນ ກ່າວດັ່ງນີ້ວ່າ ເຮົາ ແຕ່ງຕັ້ງ ເຈົ້າ ໃຫ້ ເປັນກະສັດປົກຄອງປະຊາຊົນຂອງ ພຣະຜູ້ເປັນ-
ເຈົ້າ ຄືປົກຄອງຊົນຊາດ ອິສຣາເອນ [7]ແລະ ເຈົ້າຈົ່ງ ໂຄ່ນລົ້ມລາຊະວົງຂອງ ອາຮາບ ນາຍຂອງ ເຈົ້າ
ເພື່ອ ເຮົາຈະ ໄດ້ຈັດການລົງ ໂທດ ເຢເຊເບນ ຍ້ອນ ເລືອດຂອງບັນດາຜູ້ທຳນວາຍຜູ້ຮັບ ໃຊ້ຂອງ ເຮົາ
ແລະຍ້ອນ ເລືອດຂອງບັນດາຜູ້ຮັບ ໃຊ້ທັງໝົດຂອງ ພຣະຜູ້ເປັນເຈົ້າ [8]ເພາະວ່າລາຊະວົງ ອາຮາບ
ທັງໝົດ ຈະ ຕ້ອງພິນາດ ຈິບຫາຍ ແລະ ເຮົາຈະ ຕັດຜູ້ຊາຍ ທຸກຄົນບໍ່ວ່າ ເປັນທາດ ຫລືບໍ່ ເປັນທາດ
ທົ່ວໄປໃນ ອິສຣາເອນ ອອກຈາກ ອາຮາບ [9]ແລະ ເຮົາຈະ ເຮັດ ໃຫ້ລາຊະວົງຂອງ ອາຮາບ ໃຫ້ ເປັນຄື
ກັບ ລາຊະວົງ ຂອງ ເຢໂຣໂບອາມ ລູກ ເນບັດ ແລະ ຄືກັບ ລາຊະວົງ ຂອງ ບາອາຊາ ລູກ ອາຮີຢາ
[10]ຝູງໝາຈະກັດກິນນາງ ເຢເຊເບນ ໃນນາ ເຢດຊະເຣເອນ ແລະຈະບໍ່ມີຜູ້ໃດຝັງສົບຂອງນາງ”
ແລ້ວລາວກໍເປີດປະຕູປົບໜີໄປ.

## ທະຫານອິສຣາເອນຍອມຮັບເຢຮູເປັນກະສັດ

[11]ແລະ ເມື່ອ ເຢຮູ ໄດ້ອອກມາຫາພວກຂ້າລາຊະການຂອງ ເຈົ້ານາຍຂອງ ເພິ່ນ ພວກເຂົາກໍເວົ້າ
ກັບ ເພິ່ນວ່າ “ທຸກຢ່າງຮຽບຮ້ອຍດີບໍ ເປັນຫຍັງຄົນບ້າຄົນນີ້ຈຶ່ງມາຫາທ່ານ” ເພິ່ນ ເວົ້າກັບພວກ
ເຂົາວ່າ “ທ່ານທັງຫລາຍຮູ້ຈັກຊາຍຄົນນັ້ນ ແລະຮູ້ວ່າ ລາວເວົ້າຫຍັງ” [12]ພວກເຂົາເວົ້າວ່າ “ນັ້ນ
ບໍ່ເປັນຄວາມຈິງ ຂໍບອກພວກເຮົາມາເຖີດ” ແລະເພິ່ນກ່າວວ່າ “ລາວເວົ້າຢ່າງນີ້ກັບຂ້າພະເຈົ້າວ່າ
‘ພຣະຜູ້ເປັນເຈົ້າ ກ່າວດັ່ງນີ້ວ່າ ເຮົາແຕ່ງຕັ້ງເຈົ້າໃຫ້ເປັນກະສັດປົກຄອງ ອິສຣາເອນ’” [13]ແລ້ວທຸກ
ຄົນກໍຮີບຖອດເສື້ອຜ້າຂອງຕົນອອກປູຂັ້ນໄດຢູ່ກ້ອງ ເພິ່ນ ພວກເຂົາເປົ່າແກ ແລະຮ້ອງປະກາດ
ວ່າ “ເຢຮູ ເປັນກະສັດ.”

## ເຢຮູຂ້າໂຢຣາມ

[14]ດັ່ງນີ້ແຫລະ ເຢຮູ ລູກຊາຍ ເຢໂຮຊາຟັດ ລູກຊາຍ ນິມຊີ ໄດ້ຮ່ວມກັນຄິດກະບົດຕໍ່ສູ້ ໂຢຣາມ
(ຝ່າຍ ໂຢຣາມ ພ້ອມກັບຊາວ ອິສຣາເອນ ທັງປວງກຳລັງປ້ອງກັນ ຣາຊາເອນ ກະສັດຂອງ ຊີເຣຍ ຢູ່

ທີ່ ຣາໂມດ-ກີເລອາດ [15]ແຕ່ກະສັດ ໂຢຣາມ ໄດ້ກັບໄປຮັກສາບາດແຜຊຶ່ງຄົນ ຊີເຣຍ ໄດ້ເຮັດໃຫ້ພະ
ອົງບາດເຈັບທີ່ ເຢດຊະເຣເອນ ເວລາທີ່ພະອົງສູ້ຮົບກັບ ຮາຊາເອນ ກະສັດຂອງ ຊີເຣຍ ເຢຮູ ຈຶ່ງ
ກ່າວວ່າ "ຖ້າສິ່ງນີ້ເປັນຄວາມປະສົງຂອງພວກທ່ານ ກໍຂໍຢ່າໃຫ້ຄົນໜຶ່ງຄົນໃດໜີລອດອອກໄປ
ຈາກເມືອງ ເພື່ອໄປບອກຂ່າວໃນເມືອງ ເຢດຊະເຣເອນ" [16]ແລະ ເຢຮູ ກໍສະເດັດຂຶ້ນລົດຮົບ ແລະ
ສະເດັດໄປເມືອງ ເຢດຊະເຣເອນ ເພາະ ໂຢຣາມ ນອນຢູ່ບ່ອນນັ້ນ ແລະ ອາຮາຊີຢາ ກະສັດຂອງ
ຢູດາ ໄດ້ສະເດັດລົງມາຢ້ຽມຢາມ ໂຢຣາມ.

[17]ຝ່າຍທະຫານຍາມຢືນຢູ່ເທິງຫໍຄອຍທີ່ ເຢດຊະເຣເອນ ພວກເຂົາຫລຽວເຫັນພວກຂອງ ເຢຮູ
ມາຈຶ່ງເວົ້າ ວ່າ "ຂ້າພະເຈົ້າເຫັນຄົນພວກໜຶ່ງ" ໂຢຣາມ ກ່າວວ່າ "ຈົ່ງໃຊ້ພົນທະຫານມ້າຄົນໜຶ່ງ
ໄປພົບພວກເຂົາໃຫ້ຖາມພວກເຂົາວ່າ 'ມາຢ່າງສັນຕິບໍ'" [18]ຄົນນັ້ນຈຶ່ງຂຶ້ນມ້າໄປພົບເພິ່ນ ແລະ
ເວົ້າວ່າ "ກະສັດກ່າວດັ່ງນີ້ວ່າ 'ມາຢ່າງສັນຕິບໍ'" ແລະ ເຢຮູ ຕອບວ່າ "ທ່ານກ່ຽວຂ້ອງອັນໃດກັບ
ສັນຕິພາບ ຈົ່ງລ້ຽວກັບຕາມເຮົາມາ" ແລະທະຫານຍາມກໍລາຍງານວ່າ "ຜູ້ສົ່ງຂ່າວໄປເຖິງພວກ
ເຂົາແລ້ວ ແຕ່ລາວບໍ່ກັບມາ" [19]ພະອົງຈຶ່ງສັ່ງໃຫ້ທະຫານມ້າຄົນທີສອງອອກໄປ ຜູ້ນັ້ນມາຮອດ
ພວກເຂົາແລ້ວກໍເວົ້າວ່າ "ກະສັດກ່າວດັ່ງນີ້ວ່າ 'ມາຢ່າງສັນຕິບໍ'" ແລະ ເຢຮູ ຕອບວ່າ "ທ່ານ
ກ່ຽວຂ້ອງອັນໃດກັບສັນຕິພາບ ຈົ່ງລ້ຽວກັບຕາມເຮົາມາ" [20]ທະຫານຍາມກໍລາຍງານວ່າ "ລາວ
ໄປຮອດແລ້ວແຕ່ລາວບໍ່ກັບມາອີກ ແລະການຂັບລົດນັ້ນກໍຄືກັບການຂັບລົດຂອງ ເຢຮູ ລູກຊາຍ
ນິມຊີ ເພາະວ່າລາວຂັບມາໄວຫລາຍ." [21]ໂຢຣາມ ກ່າວວ່າ "ຈົ່ງຕຽມພ້ອມ" ແລະພວກເຂົາກໍຈັດ
ຕຽມລົດຮົບຂອງພະອົງໃຫ້ພ້ອມໄວ້ ແລ້ວ ໂຢຣາມ ກະສັດຂອງ ອິສຣາເອນ ແລະ ອາຮາຊີຢາ
ກະສັດຂອງ ຢູດາ ກໍສະເດັດອອກໄປ ຕ່າງກໍຂີ່ລົດຮົບຂອງພະອົງເອງ ໂດຍໄດ້ອອກໄປປະທະກັບ
ເຢຮູ ແລະ ພົບກັນຢູ່ທີ່ດິນຂອງ ນາໂບດ ຊາວ ເຢດຊະເຣເອນ.

[22]ຢູ່ມາເມື່ອ ໂຢຣາມ ເຫັນ ເຢຮູ ແລ້ວຈຶ່ງກ່າວວ່າ "ເຢຮູ ມາຢ່າງສັນຕິບໍ?" ເຢຮູ ຕອບວ່າ "ຈະ
ສັນຕິຢ່າງໃດໄດ້ ເມື່ອການຫລິ້ນຊູ້ ແລະເວດມົນຄາຖາຂອງ ເຢເຊເບນ ແມ່ຂອງພະອົງຍັງມີຢູ່
ຫລາຍເຊັ່ນນີ້" [23]ແລ້ວ ໂຢຣາມ ໄດ້ຫັນຫລັງກັບໜີໄປຮ້ອງສັ່ງ ອາຮາຊີຢາ ວ່າ "ຂ້າແດ່ ອາຮາຊີຢາ
ພວກເຂົາຮ່ວມກັນຄິດກະບົດ."

[24]ແລະ ເຢຮູ ກໍກົ່ງທະນູດ້ວຍສຸດກຳລັງ ຍິງຖືກ ໂຢຣາມ ລະຫວ່າງກາງບ່າທັງສອງ ລູກທະນູ
ຈຶ່ງແທງຊອດຫົວໃຈຂອງພະອົງ ແລ້ວພະອົງກໍລົ້ມລົງໃນລົດຮົບຂອງຕົນເອງ [25]ເຢຮູ ກ່າວກັບ
ບິດການ ນາຍທະຫານຂອງເພິ່ນວ່າ "ຈົ່ງຍົກສົບຂອງເພິ່ນຂຶ້ນ ແລະໂຍນຖິ້ມລົງໄປໃນດິນສວນ
ຂອງ ນາໂບດ ຊາວ ເຢດຊະເຣເອນ ຈົ່ງຈື່ໄວ້ວ່າ ເມື່ອຂ້ອຍແລະເຈົ້າຂີ່ມ້າຕາມຫລັງ ອາຮາບ ພໍ່
ຂອງລາວ ພຣະຜູ້ເປັນເຈົ້າ ໄດ້ກ່າວໂທດລາວດັ່ງນີ້ວ່າ [26]'ເຮົາໄດ້ເຫັນເລືອດຂອງ ນາໂບດ ແລະ
ເລືອດຂອງລູກຫລານຂອງລາວໃນມື້ວານນີ້ແນ່ນອນ, ເຮົາຈະຕອບແທນແກ່ເຈົ້າ ເທິງດິນຕອນນີ້
ແຫລະ' ສະນັ້ນ ຈົ່ງຍົກສົບຂອງລາວຖິ້ມໄວ້ເທິງດິນບ່ອນນີ້ແຫລະຕາມພຣະທຳຂອງ ພຣະຜູ້-
ເປັນເຈົ້າ."

## ອາຣາຊີຢາກະສັດຂອງຢູດາຖືກຂ້າຕາຍ[ກ]

27ເມື່ອ ອາຣາຊີຢາ ກະສັດຂອງ ຢູດາ ເຫັນດັ່ງນັ້ນ ພະອົງໄດ້ປົບໜີໄປທາງ ເມືອງ ເບັດຮາການ
ແລະ ເຢຮູກໍຕິດຕາມພະອົງໄປ ກ່າວວ່າ "ຈົ່ງຍິງພະອົງໃນລົດຮົບ" ແລະພວກເຂົາໄດ້ຍິງພະອົງ
ຢູ່ຊື່ທາງຂ້າມເຂົ້າເມືອງ ກູເຣ ຊຶ່ງຢູ່ໃກ້ອິບເລອາມ ແລະ ພະອົງໄດ້ໜີໄປຈົນຮອດເມືອງ ເມກິດ-
ໂດ ແລະໄດ້ຕາຍໃນບ່ອນນັ້ນ 28ຂ້າລາຊະການຂອງເພິ່ນກໍບັນຈຸສົບໃສ່ລົດຮົບໄປ ເຢຣູຊາເລັມ
ແລະຝັງສົບໄວ້ໃນອຸບໂມງຂອງເພິ່ນໂດຍຝັງໄວ້ກັບບັນພະບູລຸດຂອງເພິ່ນໃນເມືອງ ດາວິດ 29ໃນ
ປີທີສິບເອັດຂອງລາຊະການ ໂຢຣາມ ລູກຊາຍຂອງ ອາຣາບ, ອາຣາຊີຢາ ໄດ້ເລີ່ມປົກຄອງ ເໜືອ
ຢູດາ.

## ເຢເຊເບນຕາຍຕາມຄຳຜູ້ທຳນວາຍ

30ເມື່ອ ເຢຮູ ມາຮອດເມືອງ ເຢດຊະເຣເອນ ແລ້ວ ເຢເຊເບນກໍຮູ້ເລື່ອງນັ້ນ ນາງກໍໄດ້ແຕ້ມຕາ
ແລະແຕ່ງຜົມ ແລະຫລຽວອອກໄປທາງປ່ອງຢ້ຽມ 31ເມື່ອ ເຢຮູ ເຂົ້າປະຕູວັງນາງມີຄຳສັ່ງວ່າ
"ເຈົ້າຜູ້ຂ້ານາຍຂອງຕົນ, ຊິມຣີ! ມາຢ່າງສັນຕິບໍ" 32ແລ້ວ ເຢຮູ ແຫງນໜ້າຫລຽວໄປທີ່ປ່ອງຢ້ຽມ
ກ່າວວ່າ "ໃຜຢູ່ຝ່າຍເຮົາ, ມີໃຜແດ່?" ມີຊາຍຕອນຊຶ່ງເປັນທະຫານປະຈຳຕົວສອງສາມຄົນຊ່ອງ
ອອກມາທາງປ່ອງຢ້ຽມເບິ່ງເພິ່ນ 33ເພິ່ນກ່າວວ່າ "ໂຍນນາງລົງມາ" ພວກເຂົາຈຶ່ງໂຍນລົງມາ
ແລະເລືອດຂອງນາງ ກໍແຕກພົ້ງອອກຕິດຝາກຳແພງແລະມ້າ ເພິ່ນຂີ່ມ້າຢຽບເທິງຕົວນາງ
34ແລ້ວໄດ້ສະເດັດເຂົ້າໄປ ກິນ ແລະດື່ມ ແລະກ່າວວ່າ "ຈັດການກັບຍິງທີ່ຖືກສາບແຊ່ງຄົນນີ້
ເອົາໄປຝັງ ເພາະນາງເປັນລູກສາວຂອງກະສັດ" 35ແຕ່ເມື່ອພວກເຂົາຈະໄປຝັງສົບນາງ ພວກ
ເຂົາກໍພົບແຕ່ກະໂຫລກຫົວ ຕີນ ແລະຝ່າມືຂອງນາງ 36ເມື່ອພວກເຂົາກັບມາທູນກະສັດ ເຢຮູ
ພະອົງກໍກ່າວວ່າ "ນີ້ເປັນໄປຕາມພຣະຄຳຂອງ ພຣະຜູ້ເປັນເຈົ້າ ຊຶ່ງພຣະອົງກ່າວທາງ ເອລີຢາ
ຊາວຕິຊະເບຜູ້ຮັບໃຊ້ຂອງພຣະອົງວ່າ 'ໝາຈະກິນເນື້ອໜັງຂອງ ເຢເຊເບນ ໃນເຂດແດນ ເຢດ-
ຊະເຣເອນ' 37ແລະສົບຂອງ ເຢເຊເບນ ຈະເປັນຄືຂີ້ສັດເທິງທົ່ງນາໃນເຂດແດນ ເຢດຊະເຣເອນ
ເພື່ອວ່າຈະບໍ່ມີໃຜກ່າວວ່າ 'ນີ້ຄື ເຢເຊເບນ.'"

# ບົດທີ 10

## ການພິພາກສາລາຊະວົງຂອງອາຮາບ

1ຝ່າຍ ອາຮາບ ມີລູກຊາຍເຈັດສິບຄົນໃນຊາມາເຣຍ ເຢຮູ ຈຶ່ງໄດ້ຂຽນໜັງສືສົ່ງໄປເຖິງບັນດາ
ເຈົ້ານາຍເມືອງຊາມາເຣຍ ເຖິງພວກເຖົ້າແກ່ ແລະເຖິງບັນດາຜູ້ປົກຄອງລູກຊາຍຂອງ ອາຮາບ
ວ່າ 2"ເນື່ອງຈາກບັນດາລູກຊາຍຂອງເຈົ້ານາຍຂອງທ່ານຢູ່ກັບທ່ານ ແລະພວກທ່ານມີລົດຮົບ,
ມ້າ, ເມືອງທີ່ມີກຳແພງແລະອາວຸດ, ເມື່ອຈົດໝາຍນີ້ມາເຖິງທ່ານ 3ຈົ່ງຄັດເລືອກລູກຊາຍເຈົ້າ
ນາຍຂອງທ່ານຜູ້ທີ່ດີທີ່ສຸດ ແລະເໝາະສົມທີ່ສຸດ ຈົ່ງຕັ້ງລາວໄວ້ເທິງທີ່ນັ່ງຂອງພໍ່ລາວ."
4ແຕ່ພວກເຂົາຢ້ານກົວທີ່ສຸດ ແລະເວົ້າວ່າ "ເບິ່ງແມ ກະສັດຂອງເພິ່ນຍັງຕ້ານທານເພິ່ນບໍ່ໄດ້
ເຮົາຈະຕໍ່ສູ້ເພິ່ນໄດ້ຢ່າງໃດ?" 5ສະນັ້ນ ຜູ້ທີ່ບັງຄັບບັນຊາພະລາຊະວັງ ແລະຜູ້ທີ່ບັງຄັບບັນຊາ

[ກ]2ຂຄວ 22:9

ບ້ານເມືອງ ພ້ອມທັງພວກຜູ້ໃຫຍ່ ແລະພວກຜູ້ລ້ຽງດູລູກຊາຍໄດ້ໃຊ້ຄົນໄປທູນ ເຢຮູວ່າ “ຂ້າ-
ນ້ອຍທັງຫລາຍເປັນຜູ້ຮັບໃຊ້ຂອງພະອົງ ແລະ ຂ້ານ້ອຍຈະເຮັດທຸກຢ່າງທີ່ພະອົງສັ່ງແກ່ພວກ
ຂ້ານ້ອຍ, ຂ້ານ້ອຍຈະບໍ່ຕັ້ງຜູ້ໜຶ່ງຜູ້ໃດໄວ້ເປັນກະສັດ, ຂໍເຊີນພະອົງເຮັດຕາມທີ່ພະອົງເຫັນດີ
ເຖີດ.”

6ແລ້ວພະອົງຈຶ່ງມີໜັງສືໄປເຖິງພວກເຂົາເປັນສະບັບທີສອງວ່າ “ຖ້າພວກທ່ານຢູ່ຝ່າຍເຮົາ
ແລະຖ້າພວກທ່ານພ້ອມທີ່ຈະເຊື່ອຟັງສຽງຂອງເຮົາ ຈົ່ງນຳຫົວຂອງບັນດາລູກຊາຍເຈົ້ານາຍຂອງ
ທ່ານມາຫາເຮົາທີ່ ເຢດຊະເຣເອນ ໃນມື້ອື່ນເວລານີ້” ຝ່າຍພວກລູກຊາຍຂອງກະສັດເຈັດສິບຄົນ
ໄດ້ຢູ່ນຳພວກຜູ້ໃຫຍ່ໃນເມືອງ ຜູ້ຊຶ່ງໄດ້ລ້ຽງດູພວກເພິ່ນມາ 7ແລະຢູ່ມາ ເມື່ອໜັງສືມາເຖິງພວກ
ເຂົາ, ພວກເຂົາກໍຈັບລູກຊາຍຂອງກະສັດຂ້າຕາຍເຈັດສິບຄົນພ້ອມກັນ ເອົາຫົວໃສ່ກະຕ່າສົ່ງໄປ
ຫາ ເຢຮູຢູ່ທີ່ ເຢດຊະເຣເອນ 8ເມື່ອຜູ້ສົ່ງຂ່າວມາທູນພະອົງວ່າ “ພວກເຂົາໄດ້ນຳເອົາຫົວລູກຊາຍ
ຂອງກະສັດມາແລ້ວ” ພະອົງກ່າວວ່າ “ຈົ່ງກອງໄວ້ເປັນສອງກອງຊື່ທາງເຂົ້າປະຕູເມືອງຈົນຮອດ
ຮຸ່ງເຊົ້າ” 9ເມື່ອຮຸ່ງເຊົ້າ ພະອົງສະເດັດອອກໄປຢືນຢູ່ບ່ອນນັ້ນ ກ່າວກັບປະຊາຊົນທັງປວງວ່າ
“ທ່ານທັງຫລາຍເປັນຜູ້ບໍ່ມີຄວາມຜິດ ສ່ວນເຮົາໄດ້ກະບົດຕໍ່ເຈົ້ານາຍຂອງເຮົາ ແລະປະຫານ
ເພິ່ນ, ແຕ່ຜູ້ໃດທີ່ຂ້າບັນດາຄົນເຫລົ່ານີ້ 10ຈົ່ງຮູ້ໄວ້ວ່າ ຈາກພຣະທຳຂອງພຣະຜູ້ເປັນເຈົ້າ ຊຶ່ງ
ພຣະຜູ້ເປັນເຈົ້າກ່າວກ່ຽວກັບເຊື້ອສາຍຂອງອາຮາບ ບໍ່ມີຕົກດິນແຕ່ຢ່າງໃດເລີຍ ເພາະພຣະຜູ້-
ເປັນເຈົ້າໄດ້ກະທຳຕາມທີ່ພຣະອົງກ່າວໂດຍ ເອລີຢາ ຜູ້ຮັບໃຊ້ຂອງພຣະອົງ” 11ເຢຮູປະຫານ
ເຊື້ອສາຍຂອງອາຮາບທີ່ເຫລືອຢູ່ໃນ ເຢດຊະເຣເອນທັງໝົດ ຜູ້ໃຫຍ່ຂອງເພິ່ນ ແລະຍາດພີ່ນ້ອງ
ຂອງເພິ່ນ ແລະປະໂລຫິດຂອງເພິ່ນ, ເຢຮູເຮັດດັ່ງນີ້ແຫລະ ບໍ່ເຫລືອໄວ້ຈັກຄົນດຽວເລີຍ.

12ແລ້ວພະອົງກໍລຸກຂຶ້ນເດີນທາງອອກໄປຊາມາເຣຍ ເມື່ອພະອົງຢູ່ທີ່ເບັດເອນ ເຂດໝູ່ບ້ານ
ຂອງຜູ້ລ້ຽງແກະຕາມທາງທີ່ໄປ 13ເຢຮູໄດ້ພົບພີ່ນ້ອງຂອງອາຮາຊີຢາກະສັດຂອງຢູດາ ແລະ
ຖາມວ່າ “ທ່ານທັງຫລາຍຄືໃຜ?” ແລະພວກເຂົາຕອບວ່າ “ຂ້າພະເຈົ້າທັງຫລາຍຄືຍາດພີ່ນ້ອງ
ຂອງອາຮາຊີຢາ ແລະຂ້າພະເຈົ້າທັງຫລາຍລົງມາຢ້ຽມຢາມບັນດາລູກຊາຍຂອງກະສັດ ແລະ
ລູກຊາຍຂອງນາງເຢເຊເບນ 14ພະອົງສັ່ງວ່າ “ຈັບພວກເຂົາທັງເປັນ” ພວກທະຫານກໍຈັບທັງ
ເປັນ ແລະປະຫານພວກເຂົາໃກ້ນ້ຳສ້າງຂອງເບັດເອນສີ່ສິບສອງຄົນນຳກັນບໍ່ເຫລືອໄວ້ຈັກຄົນ
ດຽວ.

## ເຢຮູໄວ້ຊີວິດຂອງເຢໂຮນາດາບ

15ແລະເມື່ອພະອົງສະເດັດຈາກບ່ອນນັ້ນກໍພົບ ເຢໂຮນາດາບ ລູກຊາຍ ເຣກາບ ມາຫາພະອົງ,
ພະອົງຕ້ອນຮັບລາວແລະ ເວົ້າກັບລາວວ່າ “ຈິດໃຈຂອງທ່ານສັດຊື່ຕໍ່ຈິດໃຈຂອງຂ້ອຍ ເໝືອນ
ຈິດໃຈຂອງຂ້ອຍສັດຊື່ຕໍ່ຈິດໃຈຂອງທ່ານບໍ?” ແລະເຢໂຮນາດາບທູນຕອບວ່າ “ສັດຊື່” ເຢຮູ
ກ່າວວ່າ “ຖ້າສັດຊື່ກໍເດ່ມືມາໃຫ້ເຮົາ” ລາວຈຶ່ງເດ່ມືຂອງລາວ ແລະເຢຮູກໍຈັບລາວ ຂຶ້ນເທິງລົດ
ຮົບ 16ພະອົງກ່າວວ່າ “ມາກັບເຮົາແມ ແລະເບິ່ງຄວາມຮ້ອນຮົນຂອງເຮົາເພື່ອພຣະຜູ້ເປັນເຈົ້າ”
ພະອົງຈຶ່ງໃຫ້ລາວນັ່ງລົດຮົບຂອງພະອົງໄປ 17ແລະເມື່ອພະອົງມາຮອດຊາມາເຣຍ ພະອົງກໍ
ປະຫານຄົນທັງປວງທີ່ເປັນເຊື້ອສາຍຂອງອາຮາບທີ່ເຫລືອຢູ່ໃນຊາມາເຣຍ ຈົນພະອົງໄດ້ທຳ-

ລາຍ ອາຮາບ ໝົດສິ້ນ ຕາມພຣະທຳຂອງ ພຣະຜູ້ເປັນເຈົ້າ ທີ່ພຣະອົງກ່າວກັບ ເອລີຢາ.
[18]ແລ້ວ ເຢຮູ ປະຊຸມບັນດາປະຊາຊົນທັງໝົດ ແລະກ່າວກັບພວກເຂົາວ່າ “ອາຮາບ ໄດ້ບົວລະ-
ບັດ ພະບາອານ ພຽງແຕ່ໜ້ອຍດຽວ ແຕ່ ເຢຮູ ຈະບົວລະບັດ ພະບາອານ ຫລາຍກວ່ານັ້ນ.

## ເຢຮູທຳລາຍການນັບຖືພະບາອານໃນອິສຣາເອນ

[19]ສະນັ້ນ ຈົ່ງເອີ້ນຜູ້ທຳນວາຍຂອງ ພະບາອານ ມາໃຫ້ໝົດ ທັງບັນດາຜູ້ຮັບໃຊ້ ແລະພວກ
ປະໂລຫິດຢ່າໃຫ້ຜູ້ໃດຂາດຈັກຄົນ ເພາະເຮົາຈະມີເຄື່ອງຖວາຍບູຊາອັນໃຫຍ່ທີ່ຈະຖວາຍແກ່ພະ-
ບາອານ ຜູ້ໃດຂາດຈະມີຊີວິດຢູ່ບໍ່ໄດ້” ແຕ່ ເຢຮູ ໄດ້ເຮັດເປັນອຸບາຍ ເພື່ອຈະທຳລາຍຜູ້ນັບຖື ພະ-
ບາອານ [20]ແລະ ເຢຮູ ສັ່ງວ່າ “ຈົ່ງຈັດພິທີປະຊຸມນະມັດສະການ ພະບາອານ” ພວກເຂົາກໍປະ-
ກາດຮ້ອງປະຊຸມ [21]ເຢຮູ ໄດ້ໃຊ້ໃຫ້ໄປທົ່ວແຜ່ນດິນ ອິສຣາເອນ ແລະຜູ້ນັບຖື ພະບາອານ ກໍມາທັງ
ໝົດ ຈຶ່ງບໍ່ມີໃຜເຫລືອຈັກຄົນເລີຍ ທີ່ບໍ່ໄດ້ມາ ແລະພວກເຂົາກໍເຂົ້າໄປໃນວິຫານຂອງ ພະບາ-
ອານ ແລະວິຫານຂອງ ພະບາອານ ກໍເຕັມແໜ້ນ [22]ເຢຮູ ສັ່ງຜູ້ທີ່ເບິ່ງແຍງຕູ້ເສື້ອວ່າ “ຈົ່ງເອົາເສື້ອ
ສຳລັບ ບັນດາ ຜູ້ ນັບຖື ພະບາອານ ອອກ ມາ” ພວກ ເຂົາ ກໍ ເອົາ ເສື້ອ ອອກ ມາ ໃຫ້ ຄົນ ເຫລົ່ານັ້ນ
[23]ແລ້ວ ເຢຮູ ສະເດັດ ເຂົ້າໄປໃນວິຫານຂອງ ພະບາອານ ພ້ອມກັບ ເຢໂຮນາດາບ ລູກຊາຍ ເຣການ
ພະອົງກ່າວກັບຜູ້ນັບຖື ພະບາອານ ວ່າ “ຈົ່ງຄົ້ນ ເບິ່ງ, ເບິ່ງໃຫ້ດີວ່າບໍ່ມີຜູ້ຮັບ ໃຊ້ຂອງ ພຣະຜູ້-
ເປັນເຈົ້າ ຢູ່ໃນ ໝູ່ພວກທ່ານ ໃຫ້ມີແຕ່ຜູ້ນັບຖື ພະບາອານ ເທົ່ານັ້ນ” [24]ແລ້ວພວກ ເຂົາກໍ ເຂົ້າໄປ
ຖວາຍ ເຄື່ອງສັດບູຊາ ແລະເຄື່ອງເຜົາບູຊາ ເຢຮູ ໄດ້ຕັ້ງຄົນແປດສິບຄົນໄວ້ພາຍນອກ ແລະກ່າວ
ວ່າ “ຊາຍຄົນໃດທີ່ປ່ອຍໃຫ້ຄົນໜຶ່ງຄົນໃດຊຶ່ງເຮົາມອບໄວ້ໃນມືເຈົ້າໜີລອດໄປໄດ້ລາວຕ້ອງເສຍ
ຊີວິດຂອງຕົນແທນ.”
[25]ແລະຢູ່ມາເມື່ອພະອົງສຳເລັດການຖວາຍ ເຄື່ອງ ເຜົາບູຊາ ເຢຮູ ສັ່ງ ແກ່ທະຫານຮັກສາພະອົງ
ແລະພວກນາຍທະຫານວ່າ “ຈົ່ງ ເຂົ້າໄປຂ້າພວກເຂົາຢ່າໃຫ້ລອດໜີຈັກຄົນ” ເມື່ອພວກເຂົາຂ້າ
ຄົນທັງຫລາຍດ້ວຍຄົມດາບ ແລ້ວທະຫານຮັກສາກະສັດ ແລະພວກນາຍທະຫານກໍໂຍນສົບພວກ
ເຂົາອອກໄປຂ້າງນອກ, ແລະໄປທີ່ແທ່ນບູຊາໃນວິຫານຂອງ ພະບາອານ [26]ພວກເຂົາໄດ້ນຳເອົາ
ຮູບ ເສົາລົບຊຶ່ງຢູ່ ໃນວິຫານຂອງ ພະບາອານ ອອກມາ ເຜົາໄຟ [27]ພວກ ເຂົາ ຂວ້ຳຮູບ ພະບາອານ
ແລະທຳລາຍວິຫານຂອງ ພະບາອານ ແລະເຮັດໃຫ້ເປັນສ້ວມຈົນເຖິງທຸກມື້ນີ້ [28]ເຢຮູ ໄດ້ກວາດ
ລ້າງ ພະບາອານ ໃຫ້ຈິບຫາຍໄປຈາກ ອິສຣາເອນ ດັ່ງນີ້ແຫລະ.
[29]ແຕ່ ເຢຮູ ບໍ່ ໄດ້ທັນໜີຈາກບາບທັງຫລາຍຂອງ ເຢໂຣໂບອາມ ລູກຊາຍ ເນບັດ ຊຶ່ງ ເພິ່ນໄດ້ນຳ-
ພາຊາວ ອິສຣາເອນ ເຮັດບາບນຳ ຄືຮູບງົວຄຳຊຶ່ງຢູ່ໃນເມືອງ ເບັດເອນ ແລະຢູ່ໃນເມືອງ ດານ.

## ພຣະສັນຍາສຳລັບຊົ່ວອາຍຸທີສີ່ຂອງເຢຮູ

[30]ແລະ ພຣະຜູ້ເປັນເຈົ້າ ກ່າວກັບ ເຢຮູ ວ່າ “ເພາະ ເຈົ້າ ໄດ້ ເຮັດດີໃນການກະທຳສິ່ງທີ່ສັດຊື່ໃນ
ສາຍຕາຂອງ ເຮົາ ແລະ ໄດ້ ເຮັດທຸກຢ່າງທີ່ຢູ່ ໃນ ໃຈຂອງ ເຮົາຕໍ່ ເຊື້ອສາຍ ອາຮາບ ໝົດສິ້ນ ແລ້ວ,
ລູກຫລານຂອງ ເຈົ້າຈົນລຸ້ນທີສີ່ຈະ ໄດ້ນັ່ງ ເທິງພະທີ່ນັ່ງຂອງ ອິສຣາເອນ” [31]ແຕ່ ເຢຮູບໍ່ ໄດ້ລະມັດ-
ລະວັງ ໃນການດຳເນີນຕາມພຣະບັນຍັດຂອງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງ ອິສຣາເອນ ດ້ວຍ
ສິ້ນສຸດໃຈຂອງພະອົງ, ພະອົງບໍ່ ໄດ້ຫລີກໜີຈາກບາບທັງຫລາຍຂອງ ເຢໂຣໂບອາມ ທີ່ເພິ່ນໄດ້

ເຮັດໃຫ້ຊາວອິສຣາເອນເຮັດບາບນຳ.
[32]ໃນສະໄໝນັ້ນ ພຣະຜູ້ເປັນເຈົ້າໄດ້ເລີ່ມຕັດສ່ວນຂອງອິສຣາເອນອອກ ຮາຊາເອນໄດ້ຮົບ
ຊະນະຕາມເຂດແດນອິສຣາເອນ [33]ຕັ້ງແຕ່ແມ່ນໍ້າຢໍແດນຟາກຕາເວັນອອກ ທົ່ວແຜ່ນດິນກີເລ-
ອາດ ຄົນຄາດ ຄົນຣູເບັນ ແລະຄົນມານາເຊຕັ້ງແຕ່ອາໂຣເອ ຊຶ່ງຢູ່ລຸ່ມແມ່ນໍ້າອາໂນນ ຄື
ກີເລອາດ ແລະບາຊານ.

## ເຢຮູຕາຍ ເຢໂຮອາຮາດປົກຄອງແທນ

[34]ລາຊະກິດຕ່າງໆຂອງເຢຮູ ແລະບັນດາສິ່ງຊຶ່ງພະອົງໄດ້ເຮັດ ແລະອຳນາດທັງໝົດຂອງ
ພະອົງກໍໄດ້ບັນທຶກໄວ້ໃນ ໜັງສືຂ່າວຄາວຂອງກະສັດປະເທດອິສຣາເອນ [35]ເຢຮູຈຶ່ງໄດ້ລ່ວງ
ລັບໄປຢູ່ກັບບັນພະບູລຸດຂອງເພິ່ນ ແລະພວກເຂົາກໍຝັງສົບໄວ້ໃນເມືອງຊາມາເຣຍ ແລະເຢໂຮ-
ອາຮາດລູກຊາຍຂອງພະອົງກໍໄດ້ສະເຫວີຍລາດແທນພະອົງ [36]ເວລາທີ່ເຢຮູປົກຄອງເໜືອອິ-
ສຣາເອນໃນຊາມາເຣຍນັ້ນແມ່ນຊາວແປດປີ.

# ບົດທີ 11

## ເຊື້ອວົງຂອງຢູດາໝົດສິ້ນ[ກ]

[1]ເມື່ອນາງອາທາລີຢາ ແມ່ຂອງອາຮາຊີຢາ ເຫັນວ່າລູກຊາຍຂອງນາງສິ້ນພະຊົນ ນາງກໍລຸກ-
ຂຶ້ນທຳລາຍເຊື້ອສາຍກະສັດ ທຸກຄົນຈົນໝົດ [2]ແຕ່ນາງເຢໂຮເຊບາລູກສາວຂອງກະສັດໂຢຣາມ
ນ້ອງສາວຂອງອາຮາຊີຢາ ໄດ້ນຳໂຢອາດລູກຊາຍຂອງອາຮາຊີຢາ ແລະລັກພາເພິ່ນອອກໄປ
ຈາກທ່າມກາງພວກລູກຊາຍຂອງກະສັດຜູ້ຊຶ່ງຈະຖືກປະຫານຊີວິດ ແລະນາງໄດ້ຮັບເອົາເພິ່ນ
ແລະຜູ້ລ້ຽງດູຂອງເພິ່ນ ໂດຍນຳໄປມ້ຽນໄວ້ໃນຫ້ອງນອນຂອງນາງ ເຊື່ອງເພິ່ນຈາກອາທາລີຢາ
ດັ່ງນີ້ແຫລະເພິ່ນຈຶ່ງບໍ່ໄດ້ຖືກ ປະຫານຊີວິດ [3]ແລະເພິ່ນຢູ່ກັບນາງຫົກປີ ລີ້ຢູ່ໃນພຣະວິຫານຂອງ
ພຣະຜູ້ເປັນເຈົ້າ ແລະອາທາລີຢາກໍປົກຄອງແຜ່ນດິນ.

## ໂຢອາດຮັບຕຳແໜ່ງເປັນກະສັດເໜືອຢູດາ[ຂ]

[4]ແຕ່ໃນປີທີເຈັດ ເຢໂຮຢາດາ ໄດ້ໃຊ້ໄປຫາບັນດານາຍຮ້ອຍຜູ້ບັງຄັບບັນຊາກອງທະຫານ
ແລະພວກທະຫານຮັກສາຕົວເພິ່ນ ໃຫ້ພວກເຂົາມາຫາເພິ່ນໃນພຣະວິຫານຂອງພຣະຜູ້ເປັນເຈົ້າ
ແລະເພິ່ນໄດ້ເຮັດພັນທະສັນຍາກັບພວກເຂົາ ແລະໃຫ້ພວກເຂົາສາບານໃນພຣະວິຫານຂອງ
ພຣະຜູ້ເປັນເຈົ້າ ແລະເພິ່ນໄດ້ນຳລູກຊາຍຂອງກະສັດມາໃຫ້ພວກເຂົາເຫັນ [5]ເພິ່ນສັ່ງພວກເຂົາ
ວ່າ "ທ່ານທັງຫລາຍຈົ່ງເຮັດສິ່ງນີ້ ຄື ພວກທ່ານທີ່ເຂົ້າເວນຍາມໃນວັນສະບາໂຕຈົ່ງແບ່ງເປັນ
ສາມໝວດ: ໝວດໜຶ່ງໃຫ້ເຝົ້າພະລາຊະວັງ [6]ໝວດໜຶ່ງປະຈຳຢູ່ທີ່ປະຕູສູເຣ ແລະອີກໝວດໜຶ່ງ
ປະຈຳຢູ່ທີ່ປະຕູຂ້າງຫລັງ, ທະຫານຮັກສາກະສັດ ແລະພວກທ່ານຈົ່ງເຝົ້າພະລາຊະວັງ (ບໍ່ໃຫ້
ແຂກຜູ້ໜຶ່ງຜູ້ໃດເຂົ້າມາໃກ້) ເພື່ອປ້ອງກັນໄວ້ (ບໍ່ໃຫ້ຖືກທຳລາຍ) [7]ສ່ວນທ່ານທັງຫລາຍອີກ
ສອງພວກ ຄືຜູ້ທີ່ອອກເວນຍາມໃນວັນສະບາໂຕ ໃຫ້ເຝົ້າພຣະວິຫານຂອງພຣະຜູ້ເປັນເຈົ້າ
(ອ້ອມ) ຮອບ (ຢູ່ນຳ) ກະສັດ [8]ທ່ານທັງຫລາຍຈົ່ງອ້ອມກະສັດໄວ້, ທຸກຄົນຖືອາວຸດຂອງຕົນໄວ້

[ກ]ນອກຈາກໂຢອາດ 2ຂຄວ 22:10–12 [ຂ]2ຂຄວ 23:1–11

ຜູ້ທີ່ເຂົ້າມາໃກ້ແຖວນີ້ໃຫ້ປະຫານຊີວິດ ຈົ່ງຢູ່ກັບກະສັດເມື່ອເພິ່ນສະເດັດອອກ ແລະສະເດັດ
ເຂົ້າ.”

[9]ພວກນາຍຮ້ອຍທະຫານເຮັດຕາມທີ່ປະໂລຫິດ ເຢໂຮຢາດາ ໄດ້ສັ່ງໄວ້ທຸກປະການ ແລະທຸກ
ຄົນຕ່າງກໍນຳຄົນຂອງຕົນ ທີ່ຈະເຂົ້າເວນຍາມໃນວັນສະບາໂຕ ພ້ອມກັບຄົນທີ່ຈະອອກເວນຍາມ
ໃນວັນສະບາໂຕນັ້ນ ມາຫາປະໂລຫິດ ເຢໂຮຢາດາ [10]ປະໂລຫິດກໍມອບຫອກ ແລະໂລ່ທີ່ຢູ່ໃນ
ພຣະວິຫານຂອງ ພຣະຜູ້ເປັນເຈົ້າ ຊຶ່ງແຕ່ກ່ອນເປັນຂອງກະສັດ ດາວິດ ໃຫ້ແກ່ພວກນາຍຮ້ອຍທະ-
ຫານ [11]ແລະທະຫານຮັກສາກະສັດຖືອາວຸດທຸກຄົນຢືນປະຈຳຢູ່ອ້ອມຮອບກະສັດຕັ້ງແຕ່ແຈຂອງ
ພຣະວິຫານດ້ານຂວາໄປຮອດແຈ ພຣະວິຫານດ້ານຊ້າຍ ຮອບແທ່ນບູຊາ ແລະພຣະວິຫານ
[12]ແລ້ວເພິ່ນກໍນຳລູກຊາຍຂອງກະສັດອອກມາສວມມົງກຸດໃຫ້ ແລະ (ເຄື່ອງພິຍານວາງໄວ້ເທິງ
ພະອົງ) ມອບພຣະໂອວາດໃຫ້ ພວກເຂົາຕັ້ງ ແລະເຈີມພະອົງໄວ້ເປັນກະສັດ ແລະພວກເຂົາ
ທັງຫລາຍກໍຕົບມືເວົ້າວ່າ “ຂໍກະສັດຈົ່ງຊົງພະຈະເລີນ.”

## ອາທາລີຢາຖືກປະຫານຊີວິດ[ກ]

[13]ເມື່ອນາງ ອາທາລີຢາ ໄດ້ຍິນສຽງຮ້ອງໂຮຈາກພວກທະຫານຮັກສາກະສັດ ແລະສຽງປະຊາ-
ຊົນນາງກໍເຂົ້າໄປຫາປະຊາຊົນທີ່ພຣະວິຫານຂອງ ພຣະຜູ້ເປັນເຈົ້າ [14]ເມື່ອນາງເບິ່ງແຕ່ໄກໆ ກໍ
ຫລຽວເຫັນ ກະສັດຢືນຢູ່ຂ້າງເສົາ (ແທ່ນ) ຕາມທຳນຽມປະເພນີ ມີນາຍຮ້ອຍ (ພວກເຈົ້ານາຍ)
ແລະພວກເປົ່າແກຢູ່ຂ້າງກະສັດ ແລະປະຊາຊົນຂອງແຜ່ນດິນທັງໝົດກໍມ່ວນຊື່ນຍິນດີພ້ອມທັງ
ເປົ່າແກ ນາງ ອາທາລີຢາ ກໍຈີກເສື້ອຜ້າຂອງນາງຮ້ອງວ່າ “ກະບົດ, ການກະບົດ” [15]ແລ້ວປະ-
ໂລຫິດ ເຢໂຮຢາດາ ກໍສັ່ງ ແກ່ພວກນາຍຮ້ອຍທະຫານທັງປວງຜູ້ທີ່ໄດ້ຕັ້ງ ໃຫ້ຄວບຄຸມກອງທັບວ່າ
“ຈົ່ງ ເອົານາງ ອອກ ໄປ ນອກ ແລະ ທະຫານ ຜູ້ ໃດ ທີ່ ຕິດຕາມ ນາງ ໄປ ກໍ ຈົ່ງ ປະຫານ ດ້ວຍ ດາບ”
ເພາະປະໂລຫິດກ່າວວ່າ “ຢ່າໃຫ້ນາງຖືກປະຫານໃນພຣະວິຫານຂອງ ພຣະຜູ້ເປັນເຈົ້າ” [16]ພວກ
ເຂົາຈຶ່ງຈັບນາງ ແລະນາງກໍໄປຕາມບັນດາທາງມ້າທີ່ເຂົ້າໄປໃນພະລາຊະວັງ ແລະຖືກເຂົາປະ-
ຫານຊີວິດຢູ່ບ່ອນນັ້ນ.

## ການຟື້ນຟູມາໂດຍເຢໂຮຢາດາ[ຂ]

[17]ແລະ ເຢໂຮຢາດາ ໄດ້ເຮັດຄຳໝັ້ນສັນຍາລະຫວ່າງ ພຣະຜູ້ເປັນເຈົ້າ ກັບກະສັດ ແລະປະຊາ-
ຊົນວ່າ ພວກເຂົາຈະເປັນປະຊາຊົນຂອງ ພຣະຜູ້ເປັນເຈົ້າ, ແລະລະຫວ່າງກະສັດກັບປະຊາຊົນ
[18]ແລ້ວປະຊາຊົນທັງໝົດຂອງ ແຜ່ນດິນກໍເຂົ້າໄປໃນວິຫານຂອງ ພະບາອານ ແລະທຳລາຍວິ-
ຫານນັ້ນ ພວກເຂົາໄດ້ທຳລາຍ ແທ່ນບູຊາ ແລະຮູບເຄົາລົບຂອງ ພະບາອານ ເປັນຕ່ອນໆ ແລະ
ໄດ້ປະຫານຊີວິດ ມັດຕານ ປະໂລຫິດຂອງ ພະບາອານ ຕໍ່ໜ້າແທ່ນບູຊາ ແລະປະໂລຫິດກໍ
ແຕ່ງຜູ້ເວນຍາມໄວ້ເພື່ອເບິ່ງແຍງພຣະວິຫານຂອງ ພຣະຜູ້ເປັນເຈົ້າ [19]ເພິ່ນໄດ້ເອົານາຍຮ້ອຍທະ-
ຫານ, ຜູ້ບັງຄັບບັນຊາກອງທັບ, ທະຫານຮັກສາກະສັດ ແລະປະຊາຊົນທັງໝົດຂອງແຜ່ນດິນ
ແລະພວກເຂົາໄດ້ນຳກະສັດລົງມາຈາກພຣະວິຫານຂອງ ພຣະຜູ້ເປັນເຈົ້າ ໄປຕາມທາງປະຕູຄ້າຍ
ທະຫານ ຮັກສາ ພະ ອົງ ໄປ ຮອດ ພະລາຊະວັງ ແລະ ພະ ອົງ ໄດ້ ນັ່ງ ຢູ່ ເທິງ ບ່ອນ ນັ່ງ ຂອງ ກະສັດ

[ກ]2ຂຄວ 23:12–15 [ຂ]2ຂຄວ 23:16–21

[20]ປະຊາຊົນທຸກຄົນຂອງແຜ່ນດິນຈຶ່ງຊື່ນຊົມຍິນດີ ແລະບ້ານເມືອງກໍສະຫງົບງຽບ ແລະນາງອາ-
ທາລີຢາ ໄດ້ຖືກປະຫານດ້ວຍດາບຢູ່ທີ່ພະລາຊະວັງ.
[21]ເມື່ອໂຢອາດໄດ້ເລີ່ມປົກຄອງນັ້ນ ພະອົງມີອາຍຸເຈັດປີ.

# ບົດທີ 12

## ການປົກຄອງຂອງໂຢອາດ[ກ]

[1]ໃນປີທີເຈັດຂອງລາຊະການເຢຮູ ໂຢອາດໄດ້ເລີ່ມປົກຄອງ ແລະພະອົງໄດ້ປົກຄອງໃນ
ເມືອງເຢຣູຊາເລັມສີ່ສິບປີ ແມ່ຂອງພະອົງມີຊື່ວ່ານາງຊີບີຢາຊາວເມືອງເບເອ-ເຊບາ [2]ແລະໂຢ-
ອາດໄດ້ເຮັດສິ່ງທີ່ຖືກຕ້ອງໃນສາຍພຣະເນດຂອງພຣະຜູ້ເປັນເຈົ້າ ຕະຫລອດເວລາທີ່ປະໂລຫິດ
ເຢໂຮຢາດາໄດ້ສັ່ງສອນແນະນຳພະອົງ [3]ເຖິງປານນັ້ນ ພວກເຂົາກໍຍັງບໍ່ໄດ້ມ້າງປູຊະນີຍະສະ-
ຖານສູງປະຊາຊົນຍັງຄົງຖວາຍສັດບູຊາ ແລະເຜົາເຄື່ອງຫອມໃນປູຊະນີຍະສະຖານສູງເຫລົ່າ-
ນັ້ນ.

## ພວກປະໂລຫິດທີ່ບໍ່ສັດຊື່[ຂ]

[4]ໂຢອາດກ່າວກັບພວກປະໂລຫິດວ່າ "ເງິນຊຶ່ງເປັນຂອງຖວາຍທີ່ບໍລິສຸດທັງໝົດທີ່ພວກເຂົາ
ນຳມາໃນພຣະວິຫານຂອງພະຜູ້ເປັນເຈົ້າ, ເງິນທີ່ຮັບຈາກບຸກຄົນ ຄືເງິນທີ່ກຳນົດໃຫ້ເສຍຕາມ
ບຸກຄົນ ແລະເງິນຊຶ່ງປະຊາຊົນຖວາຍດ້ວຍຄວາມສະໝັກໃຈທີ່ຈະນຳມາໄວ້ໃນພຣະວິຫານຂອງ
ພຣະຜູ້ເປັນເຈົ້າ [5]ໃຫ້ປະໂລຫິດຮັບເງິນນັ້ນຈາກພວກຄົນທີ່ຮູ້ຈັກກັນເພື່ອໃຫ້ພວກເຂົາສ້ອມແປງ
ພຣະວິຫານ (ທຸກບ່ອນທີ່ເປ່ເພແລ້ວ) ຊຶ່ງເປັນບ່ອນທີ່ພວກເຂົາເຫັນວ່າຕ້ອງການສ້ອມແປງ."
[6]ແຕ່ເມື່ອເຖິງປີທີຊາວສາມຂອງລາຊະການແຫ່ງກະສັດໂຢອາດ ປະກົດວ່າປະໂລຫິດບໍ່ໄດ້
ເຮັດການສ້ອມແປງພຣະວິຫານ [7]ເພາະສະນັ້ນ ກະສັດໂຢອາດຈຶ່ງເອີ້ນປະໂລຫິດເຢໂຮຢາດາ
ແລະປະໂລຫິດອື່ນໆ ໂດຍກ່າວວ່າ "ເປັນຫຍັງທ່ານຈຶ່ງບໍ່ໄດ້ສ້ອມແປງພຣະວິຫານບ່ອນທີ່ມັນເປ່
ເພ ເພາະສະນັ້ນຢ່າເກັບເງິນຈາກຄົນທີ່ທ່ານຮູ້ຈັກອີກຕໍ່ໄປ ແຕ່ໃຫ້ສົ່ງໄປເພື່ອການສ້ອມແປງ
ພຣະວິຫານ" [8]ປະໂລຫິດຈຶ່ງຕົກລົງວ່າຈະບໍ່ຮັບເງິນຈາກປະຊາຊົນອີກແຕ່ໃຫ້ພວກເພິ່ນສ້ອມແປງ
ພຣະວິຫານບ່ອນທີ່ເປ່ເພ.

## ການສ້ອມແປງພຣະວິຫານ[ຂ]

[9]ແລ້ວປະໂລຫິດເຢໂຮຢາດານຳຫີບມາໜ່ວຍໜຶ່ງເຈາະຮູໜຶ່ງທີ່ຝາຫີບນັ້ນ ແລະຕັ້ງໄວ້ຂ້າງໆ
ແທ່ນບູຊາດ້ານຂວາ ເມື່ອເຂົ້າໄປໃນພຣະວິຫານຂອງພຣະຜູ້ເປັນເຈົ້າ ພວກປະໂລຫິດຜູ້ທີ່ເຝົ້າ
ຢູ່ທາງເຂົ້າປະຕູກໍນຳເອົາເງິນ ທັງໝົດຊຶ່ງພວກເຂົາໄດ້ເກັບໄວ້ມາໃນພຣະວິຫານຂອງພຣະຜູ້-
ເປັນເຈົ້າໃສ່ໄວ້ໃນຫີບນັ້ນ [10]ເມື່ອພວກເຂົາເຫັນວ່າມີເງິນໃນຫີບຫລາຍແລ້ວ ເລຂາຂອງກະສັດ
ແລະມະຫາປະໂລຫິດມານັບເງິນ ແລະເອົາເງິນທີ່ພວກເຂົາພົບໃນພຣະວິຫານຂອງພຣະຜູ້ເປັນ-
ເຈົ້ານັ້ນໃສ່ຖົງມັດໄວ້ [11]ແລ້ວພວກເຂົາຈະມອບເງິນທີ່ຊັ່ງອອກແລ້ວນັ້ນໃສ່ມືຂອງຄົນງານຜູ້ເບິ່ງ-

[ກ]2ຂຄວ 24:2 [ຂ]2ຂຄວ 24:45
[ຂ]2ຂຄວ 24:8–14 [ຂ]2ຂຄວ 24:2527

ແຍງພຣະວິຫານຂອງ ພຣະຜູ້ເປັນເຈົ້າ ແລ້ວພວກເຂົາຈະຈ່າຍຕໍ່ໃຫ້ແກ່ຊ່າງໄມ້ ແລະຊ່າງກໍ່ສ້າງ
ຜູ້ເຮັດວຽກໃນພຣະວິຫານຂອງ ພຣະຜູ້ເປັນເຈົ້າ 12ໃຫ້ແກ່ຊ່າງກໍ່ ແລະຊ່າງສະກັດຫີນ ທັງຈ່າຍ
ຊື້ໄມ້ແລະຫີນສະກັດທີ່ໃຊ້ໃນການສ້ອມແປງພຣະວິຫານຂອງ ພຣະຜູ້ເປັນເຈົ້າ ແລະເພື່ອຄ່າໃຊ້
ຈ່າຍທັງໝົດໃນວຽກງານສ້ອມແປງພຣະວິຫານຂອງ ພຣະເຈົ້າ 13ແຕ່ວ່າເງິນທີ່ນຳມາຖວາຍໃນ
ພຣະວິຫານຂອງ ພຣະເຈົ້າ ນັ້ນບໍ່ໄດ້ນຳໄປໃຊ້ເຮັດຖ້ວຍເງິນ, ມີດຕັດໃສ້ຕະກຽງ, ຊາມ ແກ,
ຫລືພາຊະນະຄຳຕ່າງໆ ຫລືພາຊະນະເງິນ 14ເພາະເງິນນັ້ນ ພວກເຂົາໃຫ້ແກ່ຄົນງານຊຶ່ງເຮັດ
ວຽກສ້ອມແປງພຣະວິຫານຂອງ ພຣະຜູ້ເປັນເຈົ້າ 15ແລະພວກເຂົາບໍ່ໄດ້ຂໍບັນຊີຈາກຄົນທີ່ພວກ
ເຂົາມອບເງິນໃສ່ໃນມື ໃຫ້ເອົາໄປຈ່າຍແກ່ຄົນງານ ເພາະວ່າພວກເຂົາປະຕິບັດງານດ້ວຍຄວາມ
ສັດຊື່ 16ເງິນທີ່ໄດ້ຈາກການໄຖ່ຄວາມຜິດ ແລະເງິນທີ່ໄດ້ຈາກການໄຖ່ບາບ ບໍ່ໄດ້ນຳມາໄວ້ໃນ
ພຣະວິຫານຂອງ ພຣະຜູ້ເປັນເຈົ້າ ເງິນນັ້ນເປັນຂອງປະໂລຫິດ.

## ທະຫານຊີເຣຍຢຶດເມືອງກາດ ແຕ່ໂຢອາດໄດ້ໄຖ່ເມືອງເຢຣູຊາເລັມໄວ້

17ແລ້ວໃນຄາວນັ້ນ ຮາຊາເອນ ກະສັດຂອງຊີເຣຍ ໄດ້ຍົກທັບຂຶ້ນໄປສູ້ຮົບກັບເມືອງກາດ ແລະ
ຢຶດເມືອງນັ້ນໄດ້ ແລ້ວຮາຊາເອນ ມຸ້ງໜ້າໄປຕີເມືອງ ເຢຣູຊາເລັມ ຕໍ່ 18ໂຢອາດ ກະສັດຂອງຢູດາ
ໄດ້ນຳເອົາເຄື່ອງບູຊາທັງໝົດທີ່ ເຢໂຮຊາຟັດ ແລະ ເຢໂຮຣາມ ແລະ ອາຮາຊີຢາ ບັນພະບູລຸດ
ຂອງພະອົງຖວາຍໄວ້ນັ້ນ ແລະເຄື່ອງບູຊາຂອງພະອົງເອງ ແລະຄຳທັງໝົດທີ່ພົບໃນຄັງພຣະວິ-
ຫານຂອງ ພຣະເຈົ້າ ຂອງສຳນັກພະລາຊະວັງ ແລະສົ່ງສິ່ງເຫລົ່ານີ້ໄປເປັນຂອງຂວັນແກ່ຮາຊາ-
ເອນ ກະສັດຂອງຊີເຣຍ ແລ້ວຮາຊາເອນກໍຖອຍທັບຈາກເມືອງ ເຢຣູຊາເລັມ.

## ໂຢອາດຕາຍ ອາມາຊີຢາຂຶ້ນປົກຄອງແທນ[ຂ]

19ລາຊະກິດຕ່າງໆຂອງ ໂຢອາດ ແລະບັນດາສິ່ງທີ່ພະອົງໄດ້ກະທຳ ກໍຖືກບັນທຶກໄວ້ໃນໜັງ-
ສືຂ່າວຄາວຂອງກະສັດປະເທດຢູດາ 20ຂ້າລາຊະການຂອງພະອົງລຸກຂຶ້ນເຮັດການກະບົດຕໍ່ສູ້
ພະອົງ ແລະປະຫານ ໂຢອາດ ໃນວັງ ມິນໂລ ຕາມທາງທີ່ລົງໄປສິນລາ 21ໂຢຊາກາ ລູກຊາຍຊີເມ-
ອາດ ແລະ ເຢໂຮຊາບັດ ລູກຊາຍ ໂຊເມ ເລຂ້າລາຊະການຂອງພະອົງໄດ້ປະຫານພະອົງ ແລະ
ພວກເຂົາຝັງສົບໄວ້ກັບບັນພະບູລຸດຂອງພະອົງໃນເມືອງ ດາວິດ ແລະ ອາມາຊີຢາ ລູກຊາຍຂອງ
ພະອົງໄດ້ຂຶ້ນປົກຄອງແທນ.

# ບົດທີ 13

## ເຢໂຮອາຮາດປົກຄອງເໜືອອິສຣາເອນ

1ໃນປີທີຊາວສາມຂອງລາຊະການ ໂຢອາດ ລູກຊາຍຂອງ ອາຮາຊີຢາ ກະສັດຂອງຢູດາ ເຢ-
ໂຮອາຮາດ ລູກຊາຍຂອງ ເຢຣູ ໄດ້ເລີ່ມປົກຄອງເໜືອ ອິສຣາເອນ ໃນຊາມາເຣຍ ແລະໄດ້ປົກຄອງ
ຢູ່ສິບເຈັດປີ 2ພະອົງເຮັດສິ່ງທີ່ຊົ່ວຊ້າໃນສາຍພຣະເນດຂອງ ພຣະຜູ້ເປັນເຈົ້າ ແລະເຮັດຕາມ
ບາບທັງຫລາຍຂອງ ເຢໂຣໂບອາມ ລູກຊາຍ ເນບັດ ຊຶ່ງເພິ່ນໄດ້ນຳພາໃຫ້ອິສຣາເອນ ເຮັດບາບ
ດ້ວຍ, ພະອົງບໍ່ໄດ້ຫັນໜີຈາກສິ່ງເຫລົ່ານີ້ 3ແລະພຣະພິໂລດຂອງ ພຣະຜູ້ເປັນເຈົ້າກໍພຸ່ງຂຶ້ນຕໍ່ອິ-
ສຣາເອນ ແລະພຣະອົງໄດ້ມອບພວກເຂົາໄວ້ໃນມືຂອງ ຮາຊາເອນ ກະສັດຂອງຊີເຣຍ ແລະໃນ

ມືຂອງ ເບັນຮາດັດ ລູກຊາຍຂອງ ຮາຊາເອນ ໃນຄາວນັ້ນມາຕະຫລອດ

## ເຢໂຮອາຮາດສະແຫວງຫາພຣະຜູ້ເປັນເຈົ້າ

4ແລ້ວ ເຢໂຮອາຮາດ ໄດ້ອ້ອນວອນ ພຣະຜູ້ເປັນເຈົ້າ ແລະ ພຣະຜູ້ເປັນເຈົ້າ ຊົງຮັບຟັງ ເພິ່ນ
ເພາະພຣະອົງ ເຫັນການຍາກລຳບາກຂອງ ອິສຣາເອນ ເຫດວ່າກະສັດຂອງ ຊີເຣຍ ບີບບັງຄັບ
ພວກເຂົາ 5(ເພາະສະນັ້ນ ພຣະຜູ້ເປັນເຈົ້າ ຈຶ່ງປະທານຜູ້ຊ່ວຍຜູ້ໜຶ່ງ ແກ່ອິສຣາເອນ ພວກເຂົາ
ຈຶ່ງລອດພົ້ນຈາກມືຄົນ ຊີເຣຍ ແລະລູກຫລານ ອິສຣາເອນ ກໍອາໄສຢູ່ໃນບ້ານຂອງພວກເຂົາຄືແຕ່
ກ່ອນ 6ເຖິງປານນັ້ນ ພວກເຂົາກໍບໍ່ໄດ້ຫັນໜີຈາກບາບທັງຫລາຍຂອງເຊື້ອສາຍ ເຢໂຣໂບອາມ ຊຶ່ງ
ໄດ້ເຮັດໃຫ້ ອິສຣາເອນ ເຮັດບາບດ້ວຍ, ແຕ່ຊົງດຳເນີນໃນບາບນັ້ນ ແລະ ອາເຊຣາກໍຍັງຄົງຢູ່ໃນ
ຊາມາເຣຍ ດ້ວຍ) 7ເພາະ ເພິ່ນບໍ່ໃຫ້ປະຊາຊົນ ເຫລືອຢູ່ນຳ ເຢໂຮອາຮາດ ເວັ້ນ ແຕ່ທະຫານມ້າຫ້າ
ສິບຄົນ ແລະລົດຮົບສິບຄັນ ແລະ ທະຫານຮາບໜຶ່ງໝື່ນຄົນ ເພາະກະສັດຂອງຊີເຣຍ ໄດ້ທຳ-
ລາຍພວກເຂົາ ຄືກັບເຂົ້າໃນລານຟາດເຂົ້າ.

8ລາຊະກິດຕ່າງໆຂອງ ເຢໂຮອາຮາດ ອຳນາດຂອງພະອົງ ແລະບັນດາສິ່ງທີ່ພະອົງໄດ້ກະທຳ
ກໍຖືກບັນທຶກໄວ້ໃນໜັງສືຂ່າວຄາວຂອງກະສັດປະເທດ ອິສຣາເອນ ບໍ່ແມ່ນບໍ? 9ເຢໂຮອາຮາດ
ໄດ້ລ່ວງລັບໄປຢູ່ກັບບັນພະບູລຸດຂອງພະອົງ ແລະພວກເຂົາຝັງສົບໄວ້ໃນ ຊາມາເຣຍ ແລະ ໂຢ-
ອາດ ລູກຊາຍຂອງພະອົງຂຶ້ນປົກຄອງ ແທນທ່ານ.

## ໂຢອາດກະສັກຂອງປະເທດອິສຣາເອນ

10ໃນປີທີສາມເຈັດຂອງລາຊະການ ໂຢອາດ ກະສັດຂອງ ຢູດາ ໂຢອາດ ລູກຊາຍຂອງ ເຢໂຮ-
ອາຮາດ ໄດ້ເລີ່ມປົກຄອງເໜືອ ອິສຣາເອນ ໃນຊາມາເຣຍ ແລະໄດ້ປົກຄອງຢູ່ສິບຫົກປີ. 11ພະອົງ
ໄດ້ເຮັດໃນສິ່ງທີ່ຊົ່ວຮ້າຍຕໍ່ສາຍພຣະເນດຂອງ ພຣະຜູ້ເປັນເຈົ້າ ພະອົງບໍ່ໄດ້ຫັນໜີຈາກບາບທັງ
ໝົດຂອງ ເຢໂຣໂບອາມ ລູກຊາຍ ເນບັດ ຊຶ່ງໄດ້ເຮັດໃຫ້ອິສຣາເອນ ເຮັດບາບດ້ວຍ ແຕ່ວ່າພະ
ອົງໄດ້ເຮັດຄືກັນຕໍ່ໄປ.

12ລາຊະກິດຕ່າງໆຂອງ ໂຢອາດ ອຳນາດຂອງພະອົງ ແລະການສູ້ຮົບກັບ ອາມາຊີຢາ ກະສັດ
ຂອງ ຢູດາ ຢ່າງໃດນັ້ນ ກໍໄດ້ຖືບັນທຶກ ໄວ້ໃນ ໜັງສືຂ່າວຄາວ ຂອງກະສັດປະເທດ ອິສຣາເອນ ບໍ່
ແມ່ນບໍ? 13ໂຢອາດ ໄດ້ລ່ວງລັບໄປຢູ່ກັບບັນພະບູລຸດຂອງພະອົງ ແລະ ເຢໂຣໂບອາມ ລູກຊາຍ
ຂອງພະອົງຂຶ້ນປົກຄອງ ແທນທ່ານ. ພວກເຂົາຝັງສົບໄວ້ໃນ ຊາມາເຣຍກັບບັນດາກະສັດຂອງ
ອິສຣາເອນ.

## ເອລີຊາສິ້ນຊີວິດ

14ເມື່ອ ເອລີຊາ ໄດ້ລົ້ມເຈັບລົງດ້ວຍພະຍາດຮ້າຍແຮງ ແລະໃກ້ຈະສິ້ນລົມຫາຍໃຈນັ້ນ ໂຢອາດ
ເຈົ້າຊີວິດ ອິສຣາເອນ ໄດ້ສະເດັດມາຢ້ຽມຢາມເພິ່ນ ພະອົງຊົງຮ້ອງໄຫ້ທັງ ເວົ້າວ່າ, “ພໍ່ເອີຍ! ພໍ່
ຂອງຂ້ອຍເອີຍ ທ່ານ ເປັນຜູ້ປ້ອງກັນຜູ້ຍິ່ງໃຫຍ່ ແຫ່ງ ອິສຣາເອນ.” 15ເອລີຊາ ຈຶ່ງທູນພະອົງວ່າ,
“ຈັບເອົາທະນູ ແລະລູກສອນນັ້ນດຸ” ພະອົງກໍຈັບມັນຂຶ້ນມາ. 16ແລ້ວ ເອລີຊາ ສັ່ງໃຫ້ພະອົງຕຽມ
ຍິງໜ້າທະນູ ເຈົ້າ ໂຢອາດກໍປະຕິບັດຕາມ ແລ້ວ ເອລີຊາກໍໄດ້ເອົາມືຂອງ ເພິ່ນວາງເທິງມືຂອງ
ເຈົ້າ ໂຢອາດ. 17ແລ້ວຜູ້ປະກາດພຣະຄຳ ເອລີຊາ ໄດ້ສັ່ງໃຫ້ພະອົງເປີດປ່ອງຢ້ຽມດ້ານປະເທດຊີ-

ເຣຍອອກ ແລະສັ່ງອີກວ່າ, "ຈົ່ງຍິງໜ້າທະນູ" ໃນຂະນະທີ່ເຈົ້າໂຢອາດຍິງໜ້າທະນູຢູ່ນັ້ນ ເອ-
ລີຊາກໍຮ້ອງຂຶ້ນວ່າ, "ພະອົງເປັນລູກທະນູຂອງພຣະຜູ້ເປັນເຈົ້າຜູ້ຊະນະປະເທດຊີເຣຍ ພະອົງ
ຈະສູ້ຮົບແລະຈະມີໄຊຊະນະເໜືອພວກຊີເຣຍທີ່ເມືອງອາເຟັກ." [18]ເອລີຊາສັ່ງໃຫ້ເຈົ້າຊີວິດເອົາ
ລູກທະນູລູກອື່ນມາຟາດລົງດິນ ພະອົງກໍຟາດມັນລົງດິນສາມເທື່ອ ແລ້ວກໍຢຸດ. [19]ເທື່ອນີ້ເອລີຊາ
ໃຈຮ້າຍ ແລະເວົ້າຕໍ່ເຈົ້າຊີວິດວ່າ, "ພະອົງຄວນຟາດລົງຈັກຫ້າ ຫລືຫົກເທື່ອ ເພື່ອວ່າພະອົງຈະ
ຕີຊະນະຊີເຣຍຢ່າງສິ້ນເຊີງ ສະນັ້ນ ພະອົງຈະຕີຊະນະພວກຊີເຣຍພຽງສາມເທື່ອເທົ່ານັ້ນ."
ເອລີຊາໄດ້ສິ້ນຊີວິດໄປ ພວກເຂົາກໍເຮັດພິທີປົງສົບເພິ່ນຢ່າງສົມກຽດ ໃນຄາວນັ້ນ ພວກໂມອາບ
ໄດ້ເຂົ້າປຸ້ນສະດົມປະເທດອິສຣາເອນທຸກໆ ປີ.

## ເອລີຊາເສຍຊີວິດ ການອັດສະຈັນທີ່ອຸບໂມງຂອງເອລີຊາ

[20]ເອລີຊາໄດ້ເສຍຊີວິດ ແລະພວກເຂົາກໍຝັງສົບເພິ່ນໄວ້, ຝ່າຍພວກໂມອາບເຄີຍເຂົ້າໄປປຸ້ນ
ໃນແຜ່ນດິນນັ້ນໃນລະດູແລ້ງ [21]ຄັ້ງໜຶ່ງ ເມື່ອເຂົາກຳລັງຫາມສົບຄົນໜຶ່ງໄປ ເບິ່ງແມ ພວກເຂົາ
ເຫັນໂຈນໝູ່ໜຶ່ງກຳລັງມາ ພວກເຂົາຈຶ່ງໂຍນສົບຊາຍຄົນນັ້ນລົງໄປໃນອຸບໂມງຂອງເອລີຊາ
ເມື່ອສົບຊາຍຄົນນັ້ນລົງໄປແຕະຕ້ອງກະດູກຂອງເອລີຊາ ລາວກໍຟື້ນຄືນມີຊີວິດລຸກຂຶ້ນຢືນຢູ່.
[22]ຝ່າຍຮາຊາເອນກະສັດຂອງຊີເຣຍໄດ້ບີບບັງຄັບຄົນອິສຣາເອນຢູ່ຕະຫລອດລາຊະການ
ຂອງເຢໂຮອາຮາດ [23]ແຕ່ພຣະຜູ້ເປັນເຈົ້າຊົງພຣະກະລຸນາຕໍ່ພວກເຂົາ ແລະໄດ້ເມດຕາພວກ
ເຂົາ ພຣະອົງຊົງຫັນພຣະພັກມາທາງພວກເຂົາ ເພາະຄຳສັນຍາຂອງພຣະອົງກັບອັບຣາຮາມ
ອີຊາກ ແລະຢາໂຄບ ພຣະອົງຈະບໍ່ໄດ້ທຳລາຍພວກເຂົາຫລືປະຖິ້ມພວກເຂົາ ໄປຈາກພຣະພັກ
ພຣະອົງຈົນບັດນີ້ [24]ເມື່ອຮາຊາເອນກະສັດຂອງຊີເຣຍຕາຍ, ເບັນຮາດັດລູກຊາຍຂອງພະອົງກໍ
ໄດ້ຂຶ້ນປົກຄອງແທນພະອົງ [25]ແລ້ວໂຢອາດລູກຊາຍຂອງເຢໂຮອາຮາດໄດ້ຢຶດບັນດາຫົວເມືອງ
ຈາກມືຂອງເບັນຮາດັດລູກຊາຍຮາຊາເອນກັບຄືນມາ ເປັນເມືອງທີ່ພະອົງຢຶດໄດ້ຈາກມືເຢໂຮ-
ອາຮາດພໍ່ຂອງພະອົງເມື່ອເຮັດສົງຄາມກັນ, ໂຢອາດໄດ້ຮົບຊະນະພະອົງເຖິງສາມເທື່ອ ແລະ
ໄດ້ຫົວເມືອງອິສຣາເອນກັບຄືນມາອີກ.

# ບົດທີ 14

## ກະສັດອາມາຊີຢາປົກຄອງເໜືອຢູດາ[ກ]

[1]ໃນປີທີສອງຂອງລາຊະການໂຢອາດລູກຊາຍຂອງເຢໂຮອາຮາດກະສັດຂອງອິສຣາເອນ;
ອາມາຊີຢາລູກຊາຍຂອງໂຢອາດກະສັດຂອງຢູດາໄດ້ເລີ່ມປົກຄອງນັ້ນ [2]ເມື່ອພະອົງໄດ້ເລີ່ມ
ປົກຄອງນັ້ນ ພະອົງມີອາຍຸຊາວຫ້າປີ ແລະໄດ້ປົກຄອງໃນເຢຣູຊາເລັມຊາວເກົ້າປີ ແມ່ຂອງພະ
ອົງມີຊື່ວ່າ ນາງເຢໂຮອັດດັນຊາວເມືອງເຢຣູຊາເລັມ [3]ພະອົງເປັນຜູ້ທີ່ສັດຊື່ໃນສາຍພຣະເນດ
ຂອງພຣະຜູ້ເປັນເຈົ້າ ແຕ່ວ່າຍັງບໍ່ເໝືອນກັບດາວິດບັນພະບູລຸດຂອງພະອົງ, ພະອົງໄດ້ເຮັດ
ຕາມສິ່ງທັງຫລາຍທີ່ໂຢອາດພໍ່ຂອງພະອົງໄດ້ເຮັດມາ [4]ແຕ່ວ່າປູຊະນີຍະສະຖານສູງນັ້ນຍັງບໍ່ໄດ້
ທຳລາຍປະຊາຊົນຍັງຄົງຖວາຍບູຊາ ແລະເຜົາເຄື່ອງຫອມເທິງປູຊະນີຍະສະຖານສູງເຫລົ່ານັ້ນ.

---

[ກ]2ຂຄວ 25:1 [ຂ]2ຂຄວ 25:17–24

5ແລະຢູ່ມາເມື່ອລາຊະອານາຈັກຢູ່ໃນມືຂອງພະອົງຢ່າງໝັ້ນຄົງແລ້ວ ພະອົງກໍປະຫານຊີວິດ
ຂ້າລາຊະການຂອງພະອົງຜູ້ທີ່ຂ້າກະສັດຄືພໍ່ຂອງພະອົງນັ້ນ 6ແຕ່ພະອົງບໍ່ໄດ້ປະຫານຊີວິດລູກ
ຫລານຂອງຜູ້ທີ່ຂ້າ ຕາມທີ່ໄດ້ບັນທຶກໄວ້ໃນໜັງສືພຣະບັນຍັດຂອງ ໂມເຊ ຊຶ່ງ ພຣະຜູ້ເປັນເຈົ້າ
ໄດ້ສັ່ງວ່າ "ຢ່າປະຫານຊີວິດພໍ່ເພາະການກະທຳຂອງລູກຫລານ ຫລືຢ່າປະຫານຊີວິດລູກຫລານ
ເພາະການກະທຳຂອງພໍ່ ແຕ່ທຸກຄົນຕາຍເພາະບາບຂອງຕົນເອງ."

7ພະອົງປະຫານຊີວິດຄົນ ເອໂດມ ໜຶ່ງໝື່ນຄົນໃນຮ່ອມພູເຂົາເກືອ ແລະຢຶດເມືອງ ເສລາ ດ້ວຍ
ສົງຄາມ ແລະເອີ້ນເມືອງນັ້ນວ່າ ໂຢກເທເອນ ຈົນເຖິງທຸກມື້ນີ້.

## ສົງຄາມລະຫວ່າງອິສຣາເອນກັບຢູດາ[ຂ]

8ແລະ ອາມາຊີຢາ ໃຊ້ຜູ້ສົ່ງຂ່າວໄປຫາ ໂຢອາດ ລູກຊາຍຂອງ ເຢໂຮອາຮາດ ລູກຊາຍຂອງ ເຢຮູ
ກະສັດຂອງ ອິສຣາເອນ ທູນວ່າ "ຈົ່ງມາແມ ຂໍໃຫ້ເຮົາປະເຊີນໜ້າກັນ" 9ແລະ ໂຢອາດ ກະສັດ
ຂອງ ອິສຣາເອນ ໄດ້ສົ່ງຂ່າວໄປຫາ ອາມາຊີຢາ ກະສັດຂອງ ຢູດາ ວ່າ "ຕົ້ນຜັກໜາມ ເທິງພູເຂົາ
ເລບານອນ ສົ່ງຂ່າວໄປຫາຕົ້ນແປກເທິງພູເຂົາ ເລບານອນ ວ່າ 'ຈົ່ງຍົກລູກສາວຂອງເຈົ້າໃຫ້ເປັນ
ເມຍລູກຊາຍຂອງຂ້ອຍເທີ້ນ' ຝ່າຍສັດປ່າໂຕໜຶ່ງຢູ່ ເລບານອນ ໄດ້ກາຍມາແລະໄດ້ຢຽບຕົ້ນຜັກ-
ໜາມນັ້ນລົງ 10ແມ່ນຢູ່ທ່ານໄດ້ໂຈມຕີ ເອໂດມ ຢ່າງຮຸນແຮງ ແລະໃຈຂອງທ່ານກໍເຮັດໃຫ້ທ່ານ
ອວດອົ່ງຈອງຫອງຂຶ້ນ, ຈົ່ງພໍໃຈໃນສັກສີຂອງທ່ານເຖີດ ແລະຄ້າງຢູ່ເຮືອນ ເປັນຫຍັງທ່ານຈຶ່ງ
ເລົ້າໃຈຕົນເອງໃຫ້ຕໍ່ສູ້ ແລະໄປຮັບອັນຕະລາຍ ຊຶ່ງຈະໃຫ້ທ່ານລົ້ມລົງ ທັງທ່ານ ແລະຢູດາ
ດ້ວຍ" 11ແຕ່ ອາມາຊີຢາ ບໍ່ໄດ້ຟັງ ໂຢອາດ ກະສັດຂອງ ອິສຣາເອນ ພະອົງຈຶ່ງຂຶ້ນໄປ, ພະອົງກັບ
ອາມາຊີຢາ ກະສັດຂອງ ຢູດາ ກໍປະເຊີນໜ້າກັນທີ່ ເບັດ-ເຊເມັດ ຊຶ່ງເປັນຂອງ ຢູດາ 12ແລະຢູດາກໍ
ພ່າຍແພ້ ອິສຣາເອນ ແລະທຸກຄົນກໍໜີກັບໄປບ້ານເຮືອນຂອງຕົນ 13ແລະ ໂຢອາດ ກະສັດຂອງ
ອິສຣາເອນ ກໍຈັບ ອາມາຊີຢາ ກະສັດ ຂອງ ຢູດາ ລູກຊາຍ ຂອງ ໂຢອາດ ລູກຊາຍ ຂອງ ອາຮາຊີຢາ
ໄດ້ທີ່ເມືອງ ເບັດ-ເຊເມັດ ແລະໄດ້ມາ ເຢຣູຊາເລັມ ແລະທຳລາຍກຳແພງ ເຢຣູຊາເລັມ ລົງສີ່ຮ້ອຍ
ສອກ ຕັ້ງແຕ່ປະຕູ ເອຟຣາຢິມ ຈົນຮອດປະຕູແຈ 14ພະອົງໄດ້ຢຶດເອົາຄຳ ກັບເງິນທັງໝົດ
ແລະເຄື່ອງໃຊ້ທັງໝົດທີ່ພົບໃນພຣະວິຫານຂອງ ພຣະຜູ້ເປັນເຈົ້າ ແລະໃນຄັງຂອງສຳນັກພະລາ-
ຊະວັງ ພ້ອມກັບຄົນປະກັນ ແລ້ວຈຶ່ງໄດ້ກັບໄປ ຊາມາເຣຍ.

15ລາຊະກິດຕ່າງໆຂອງ ໂຢອາດ ອຳນາດຂອງພະອົງແລະການສູ້ຮົບກັບ ອາມາຊີຢາ ກະສັດ
ຂອງ ຢູດາ ຢ່າງໃດນັ້ນກໍໄດ້ຖືບັນທຶກ ໄວ້ໃນໜັງສືຂ່າວຄາວຂອງກະສັດປະເທດ ອິສຣາເອນ ບໍ່
ແມ່ນບໍ? 16ໂຢອາດ ໄດ້ລ່ວງລັບໄປຢູ່ກັບບັນພະບູລຸດຂອງພະອົງ ແລະພວກເຂົາຝັງສົບໄວ້ໃນ
ຊາມາເຣຍກັບບັນດາກະສັດຂອງ ອິສຣາເອນ ແລະ ເຢໂຣໂບອາມ ລູກຊາຍຂອງພະອົງຂຶ້ນປົກ-
ຄອງແທນທ່ານ.

## ອາມາຊີຢາຕາຍ[ກ]

17ຫລັງ ຈາກ ການ ຕາຍ ຂອງ ໂຢອາດ ລູກ ຊາຍ ຂອງ ເຢໂຮອາຮາດ ກະສັດ ຂອງ ອິສຣາເອນ
ແລ້ວ ອາມາຊີຢາ ລູກຊາຍຂອງ ໂຢອາດ ກະສັດຂອງ ຢູດາ ກໍມີຊີວິດຢູ່ອີກສິບຫ້າປີ 18ລາຊະກິດ

[ກ]2ຂຄວ 25:26–28

ຕ່າງໆຂອງ ອາມາຊີຢາ ໄດ້ຖືກບັນທຶກໄວ້ໃນໜັງສືຂ່າວຄາວຂອງກະສັດປະເທດ ຢູດາ [19]ພວກ
ເຂົາໄດ້ຮ່ວມກັນກະບົດຕໍ່ສູ້ພະອົງໃນ ເຢຣູຊາເລັມ ແລະພະອົງໄດ້ປົບໜີໄປເມືອງ ລາກິດ ແຕ່
ພວກເຂົາໄດ້ໃຊ້ຄົນໄປນຳພະອົງ ທີ່ ລາກິດ ແລະປະຫານຊີວິດພະອົງຢູ່ບ່ອນນັ້ນ [20]ພວກເຂົາ
ໄດ້ເອົາສົບບັນທຸກໃສ່ມ້າກັບມາ ແລະຝັງສົບໄວ້ໃນ ເຢຣູຊາເລັມ ຢູ່ກັບບັນພະບູລຸດຂອງພະອົງໃນ
ເມືອງ ດາວິດ [21]ແລະປະຊາຊົນທັງໝົດຂອງ ຢູດາ ກໍຕັ້ງ ອາຊາຣີຢາ ຜູ້ຊຶ່ງມີອາຍຸສິບຫົກປີໃຫ້ເປັນ
ກະສັດ ແທນ ອາມາຊີຢາ ພໍ່ຂອງເພິ່ນ [22]ພະອົງໄດ້ສ້າງເມືອງ ເອລັດ ແລະໄດ້ເອົາເມືອງນີ້ຄືນໃຫ້
ແກ່ຢູດາ ຫລັງຈາກທີ່ກະສັດໄດ້ລ່ວງຫລັບໄປຢູ່ກັບບັນພະບູລຸດຂອງເພິ່ນ.

## ເຢໂຣໂບອາມທີສອງປົກຄອງເໜືອອິສຣາເອນ

[23]ໃນປີທີສິບຫ້າຂອງລາຊະການ ອາມາຊີຢາ ລູກຊາຍຂອງ ໂຢອາດ ກະສັດຂອງ ຢູດາ ເຢໂຣ-
ໂບອາມ ລູກຊາຍຂອງ ໂຢອາດ ກະສັດຂອງ ອິສຣາເອນ ໄດ້ເລີ່ມປົກຄອງໃນ ຊາມາເຣຍ ແລະໄດ້
ປົກຄອງຢູ່ສີ່ສິບເອັດປີ [24]ພະອົງໄດ້ເຮັດໃນສິ່ງທີ່ຊົ່ວຮ້າຍຕໍ່ສາຍພຣະເນດຂອງ ພຣະຜູ້ເປັນເຈົ້າ
ພະອົງບໍ່ໄດ້ຫັນໜີຈາກບາບທັງໝົດຂອງ ເຢໂຣໂບອາມ ລູກຊາຍ ເນບັດ ຊຶ່ງໄດ້ເຮັດໃຫ້ອິສຣາ-
ເອນ ເຮັດບາບດ້ວຍ [25]ພະອົງໄດ້ຕີເອົາດິນແດນ ອິສຣາເອນ ຄືນມາຕັ້ງແຕ່ທາງເຂົ້າເມືອງ ຮາມັດ
ໄກໄປຈົນຮອດທະເລຂອງ ອາຣາບາ ຕາມພຣະທຳຂອງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງ ອິສຣາ-
ເອນ ຊຶ່ງພຣະອົງກ່າວ ໂດຍຜູ້ຮັບໃຊ້ຂອງພຣະອົງຄື ໂຢນາ ຜູ້ເປັນລູກຊາຍ ອາມິດຕາຍ ຜູ້ທຳ-
ນວາຍທີ່ມາຈາກ ກັດ-ເຮເຟ [26]ເພາະ ພຣະຜູ້ເປັນເຈົ້າ ທອດພຣະເນດເຫັນວ່າ ຄວາມທຸກໃຈຂອງ
ອິສຣາເອນ ນັ້ນຂົມຂື່ນຫລາຍ ເພາະບໍ່ມີຜູ້ໃດເຫລືອຢູ່ ບໍ່ວ່າຂ້າທາດ ຫລືບໍ່ເປັນຂ້າທາດ ແລະບໍ່
ມີຜູ້ໃດຊ່ວຍ ອິສຣາເອນ [27]ພຣະຜູ້ເປັນເຈົ້າບໍ່ໄດ້ກ່າວວ່າຈະລຶບຊື່ ອິສຣາເອນ ອອກຈາກຟ້າສະ-
ຫວັນ ແຕ່ພຣະອົງໄດ້ຊ່ວຍພວກເຂົາໂດຍພະຫັດຂອງ ເຢໂຣໂບອາມ ລູກຊາຍຂອງ ໂຢອາດ.

## ເຢໂຣໂບອາມທີສອງຕາຍ ເສກາລີຢາຂຶ້ນປົກຄອງແທນ

[28]ລາຊະກິດຕ່າງໆຂອງ ເຢໂຣໂບອາມ ແລະບັນດາສິ່ງທີ່ພະອົງໄດ້ກະທຳ ແລະອຳນາດຂອງ
ພະອົງ ພະອົງໄດ້ສູ້ຮົບຢ່າງໃດ ແລະເລື່ອງທີ່ພະອົງໄດ້ຕີເອົາ ດາມາເຊ ແລະ ຮາມັດ ຄືນແກ່ອິ-
ສຣາເອນ ຊຶ່ງເຄີຍເປັນຂອງ ຢູດາ ກໍໄດ້ບັນທຶກໄວ້ໃນໜັງສື ຂ່າວຄາວຂອງກະສັດ ອິສຣາເອນ
[29]ເຢໂຣໂບອາມ ໄດ້ລ່ວງລັບໄປຢູ່ກັບບັນພະບູລຸດຂອງ ເພິ່ນ ຄືບັນດາກະສັດຂອງ ອິສຣາເອນ
ແລະ ເຊຄາຣີຢາ ລູກຊາຍຂອງພະອົງຂຶ້ນປົກຄອງແທນ.

# ບົດທີ 15

## ອາຊາຣີຢາ[ກ]

[1]ໃນປີທີຊາວເຈັດຂອງລາຊະການ ເຢໂຣໂບອາມ ກະສັດຂອງ ອິສຣາເອນ ອາຊາຣີຢາ ລູກ
ຊາຍຂອງ ອາມາຊີຢາ ກະສັດຂອງຢູດາ ໄດ້ເລີ່ມປົກຄອງ [2]ເມື່ອພະອົງໄດ້ເລີ່ມປົກຄອງນັ້ນ ພະ
ອົງມີອາຍຸສິບຫົກປີແລະໄດ້ປົກຄອງຢູ່ໃນເມືອງ ເຢຣູຊາເລັມ ຫ້າສິບສອງປີ ແມ່ຂອງພະອົງມີຊື່ວ່າ
ນາງ ເຢໂກລີຢາ ຊາວ ເມືອງ ເຢຣູຊາເລັມ [3]ພະອົງ ເປັນຜູ້ທີ່ສັດຊື່ໃນສາຍພຣະເນດຂອງ ພຣະຜູ້-

[ກ]ອຸດຊີຢາ ໄດ້ປົກຄອງເໜືອຢູດາ 2ຂຄວ 26:13

ເປັນເຈົ້າ ທຸກຢ່າງທີ່ອາມາຊີຢາພະບິດາຂອງພະອົງໄດ້ເຮັດ [4]ເຖິງປານນັ້ນ ປູຊະນີຍະສະຖານ
ສູງກໍຍັງບໍ່ໄດ້ຖືກທຳລາຍ ປະຊາຊົນຍັງຖວາຍບູຊາ ແລະເຜົາເຄື່ອງຫອມເທິງປູຊະນີຍະສະຖານ
ສູງເຫລົ່ານັ້ນ [5]ແລະພຣະຜູ້ເປັນເຈົ້າໄດ້ລົງໂທດກະສັດ, ກະສັດຈຶ່ງໄດ້ເປັນພະຍາດຂີ້ທູດຈົນ
ຮອດມື້ສິ້ນຊີວິດ ແລະໄດ້ຢູ່ໃນວັງຕ່າງຫາກ ໂຢທາມລູກຊາຍຂອງກະສັດຄວບຄຸມສຳນັກພະ-
ລາຊະວັງ ແລະໄດ້ຕັດສິນປະຊາຊົນຂອງແຜ່ນດິນ.

## ອາຊາຣີຢາຕາຍ ໂຢທາມຂຶ້ນປົກຄອງແທນພະອົງ

[6]ລາຊະກິດຕ່າງໆຂອງອາຊາຣີຢາ ແລະບັນດາສິ່ງທີ່ພະອົງໄດ້ເຮັດກໍໄດ້ບັນທຶກໄວ້ໃນໜັງສື
ຂ່າວຄາວ ຂອງກະສັດຢູດາ [7]ອາຊາຣີຢາໄດ້ລ່ວງລັບໄປຢູ່ກັບບັນພະບູລຸດຂອງພະອົງ ແລະ
ພວກເຂົາຝັງສົບໄວ້ກັບບັນພະບູລຸດຂອງພະອົງໃນເມືອງດາວິດ ແລະໂຢທາມລູກຊາຍຂອງພະ
ອົງຂຶ້ນປົກຄອງແທນ.

[8]ໃນປີທີສາມສິບແປດຂອງລາຊະການອາຊາຣີຢາກະສັດຂອງຢູດາ, ເຊຄາຣີຢາລູກຊາຍ
ຂອງເຢໂຣໂບອາມຂຶ້ນປົກຄອງເໜືອອິສຣາເອນໃນຊາມາເຣຍຫົກເດືອນ [9]ພະອົງໄດ້ເຮັດສິ່ງທີ່
ຊົ່ວຮ້າຍໃນສາຍພຣະເນດຂອງພຣະຜູ້ເປັນເຈົ້າເໝືອນດັ່ງບັນພະບູລຸດຂອງພະອົງໄດ້ ກະທຳມາ
ພະອົງບໍ່ໄດ້ຫັນໜີຈາກບາບທັງຫລາຍຂອງເຢໂຣໂບອາມລູກຊາຍເນບັດ ຊຶ່ງໄດ້ເຮັດໃຫ້ອິສຣາ-
ເອນເຮັດບາບດ້ວຍ.

## ເຊຄາຣີຢາຕາຍ ຊານລູມຂຶ້ນປົກຄອງແທນ

[10]ຊານລູມ ລູກຊາຍ ຢາເບັດ ຮ່ວມກັນກະບົດພະອົງ ແລະ ໄດ້ໂຄ່ນລົ້ມພະອົງຕໍ່ໜ້າປະຊາຊົນ
ປະຫານຊີວິດພະອົງ ແລະຂຶ້ນ ປົກຄອງແທນ [11]ລາຊະກິດຕ່າງໆຂອງເຊຄາຣີຢາ ໄດ້ບັນທຶກ
ໄວ້ໃນໜັງສືຂ່າວຄາວຂອງກະສັດປະເທດອິສຣາເອນ [12]ເຫດການນີ້ເປັນໄປຕາມພຣະຄຳທີ່
ພຣະຜູ້ເປັນເຈົ້າໄດ້ກ່າວແກ່ເຢຮູວ່າ “ລູກຊາຍຂອງເຈົ້າຈະນັ່ງເທິງພະທີ່ນັ່ງ ຂອງອິສຣາເອນ
ເຖິງລຸ້ນທີສີ່” ແລະກໍເປັນໄປຢ່າງນັ້ນແຫລະ.

[13]ຊານລູມ ລູກຊາຍ ຢາເບັດ ໄດ້ເລີ່ມປົກຄອງໃນປີທີສາມສິບເກົ້າຂອງລາຊະການອຸດຊີຢາ
ກະສັດຂອງຢູດາ ໄດ້ປົກຄອງໃນຊາມາເຣຍເປັນເວລາໜຶ່ງເດືອນເຕັມ [14]ແລ້ວເມນາເຮມລູກ
ຊາຍກາດີໄດ້ຂຶ້ນມາຈາກເມືອງຕີຣະຊາ ມາຮອດຊາມາເຣຍ ແລະໄດ້ຕໍ່ສູ້ຊານລູມລູກຊາຍ
ຢາເບັດໃນຊາມາເຣຍ ແລະປະຫານຊີວິດພະອົງແລະໄດ້ຂຶ້ນປົກຄອງແທນພະອົງ [15]ລາຊະກິດ
ຕ່າງໆຂອງຊານລູມ ແລະການຮ່ວມກັນຄິດກະບົດທີ່ພະອົງໄດ້ເຮັດ ໄດ້ບັນທຶກໄວ້ໃນໜັງສື
ຂ່າວຄາວຂອງກະສັດປະເທດອິສຣາເອນ.

## ເມນາເຮມປົກຄອງເໜືອອິສຣາເອນ

[16]ໃນຄາວນັ້ນເມນາເຮມໄດ້ເຂົ້າໄປປຸ້ນຕັບປູອາ ແລະບັນດາຜູ້ທີ່ຢູ່ໃນເມືອງນັ້ນ ແລະດິນ-
ແດນຂອງເມືອງນັ້ນຕັ້ງແຕ່ເມືອງຕີຣະຊາໄປ ເພາະພວກເຂົາບໍ່ໄດ້ໄຂປະຕູໃຫ້ແກ່ພະອົງ ພະອົງ
ຈຶ່ງໂຈມຕີເມືອງນັ້ນ ແລະໄດ້ຜ່າທ້ອງແມ່ມານໃນເມືອງນັ້ນທຸກຄົນ.

[17]ໃນປີທີສາມສິບເກົ້າຂອງລາຊະການອາຊາຣີຢາກະສັດຂອງຢູດາ ເມນາເຮມລູກຊາຍກາ-
ດີໄດ້ເລີ່ມປົກຄອງເໜືອອິສຣາເອນ ແລະໄດ້ປົກຄອງໃນຊາມາເຣຍສິບປີ [18]ພະອົງໄດ້ເຮັດສິ່ງ

ທີ່ຊົ່ວຮ້າຍໃນສາຍພຣະເນດຂອງ ພຣະຜູ້ເປັນເຈົ້າ, ພະອົງບໍ່ໄດ້ຫັນໜີຈາກບາບທັງຫລາຍຂອງ
ເຢໂຣໂບອາມ ລູກຊາຍ ເນບັດ ຕະຫລອດລາຊະການຂອງພະອົງ ຊຶ່ງໄດ້ເຮັດໃຫ້ອິສຣາເອນ
ເຮັດບາບດ້ວຍ 19ຕິກະລາດປີເລເຊກະສັດຂອງ ອັດຊີເຣຍ ໄດ້ຍົກທັບຂຶ້ນມາຕໍ່ສູ້ແຜ່ນດິນ ແລະ
ເມນາເຮມ ໄດ້ເອົາເງິນໜຶ່ງພັນຕະລັນຕົນ ໃຫ້ແກ່ຕິກະລາດປີເລເຊເພື່ອຈະໃຫ້ເພິ່ນຊ່ວຍພະອົງ
ຢຶດລາຊະອານາຈັກໄວ້ໃນພະຫັດຂອງພະອົງໄດ້ 20ເມນາເຮມ ໄດ້ຮີບເກັບເອົາເງິນເຫລົ່ານັ້ນມາ
ຈາກ ອິສຣາເອນ ຄືຈາກຄົນຮັ່ງມີທຸກຄົນ, ຄົນລະຫ້າສິບເຊເຂ ເພື່ອຖວາຍໃຫ້ແກ່ກະສັດຂອງ
ອັດຊີເຣຍ, ກະສັດຂອງ ອັດຊີເຣຍຈຶ່ງຍົກທັບກັບຄືນ ແລະບໍ່ໄດ້ຢູ່ໃນແຜ່ນດິນນັ້ນ.

## ເມນາເຮມຕາຍ ເປກາຮີຢາຂຶ້ນປົກຄອງແທນ

21ລາຊະກິດຕ່າງໆຂອງ ເມນາເຮມ ແລະບັນດາສິ່ງທີ່ພະອົງໄດ້ເຮັດ ກໍໄດ້ບັນທຶກໄວ້ໃນໜັງ-
ສືຂ່າວຄາວຂອງກະສັດ ປະເທດ ອິສຣາເອນ 22ເມນາເຮມ ກໍລ່ວງຫລັບໄປຢູ່ກັບບັນພະບູລຸດ
ຂອງພະອົງ ແລະ ເປກາຮີຢາ ລູກຊາຍຂອງພະອົງກໍຂຶ້ນປົກຄອງແທນ.

## ເປກາຮີຢາຕາຍ ເປຄາຂຶ້ນປົກຄອງແທນ

23ໃນປີທີຫ້າສິບຂອງລາຊະການ ອາຊາຣີຢາ ກະສັດຂອງ ຢູດາ, ເປກາຮີຢາ ລູກຊາຍຂອງ ເມ-
ນາເຮມ ໄດ້ ເລີ່ມປົກຄອງ ເໜືອ ອິສຣາເອນ ໃນ ຊາມາເຣຍ ແລະ ພະ ອົງ ໄດ້ ປົກຄອງ ຢູ່ ສອງ ປີ
24ພະອົງໄດ້ເຮັດສິ່ງທີ່ຊົ່ວຮ້າຍໃນສາຍພຣະເນດຂອງ ພຣະຜູ້ເປັນເຈົ້າ ພະອົງບໍ່ໄດ້ຫັນໜີຈາກ
ບາບທັງຫລາຍຂອງ ເຢໂຣໂບອາມ ລູກຊາຍ ເນບັດ ຊຶ່ງໄດ້ເຮັດໃຫ້ອິສຣາເອນ ເຮັດບາບດ້ວຍ
25ເປກາ ລູກຊາຍ ເຣມາລີຢາ ຜູ້ບັນຊາການກອງທັບຂອງພະອົງໄດ້ຮ່ວມກັນຄິດກະບົດຕໍ່ສູ້ພະອົງ
ແລະໄດ້ ປະຫານພະອົງ ໃນຊາມາເຣຍ ໃນປ້ອມຂອງສຳນັກພະລາຊະວັງກັບ ອາໂກບ ແລະ
ອາຣີເຢ ແລະມີຄົນ ກີເລອາດ ຫ້າສິບຄົນຮ່ວມຢູ່ກັບເພິ່ນ, ເພິ່ນໄດ້ປະຫານກະສັດ ແລະໄດ້ຂຶ້ນ
ປົກຄອງແທນ.

26ລາຊະກິດຕ່າງໆຂອງ ເປກາຮີຢາ ແລະບັນດາສິ່ງທີ່ພະອົງໄດ້ເຮັດ ໄດ້ບັນທຶກໄວ້ໃນໜັງສື
ຂ່າວຄາວຂອງ ກະສັດປະເທດ ອິສຣາເອນ.

## ເປກາປົກຄອງເໜືອອິສຣາເອນ

27ໃນປີທີຫ້າສິບສອງຂອງລາຊະການ ອາຊາຣີຢາ ກະສັດຂອງ ຢູດາ ເປກາ ລູກຊາຍ ເຣມາລີ-
ຢາ ໄດ້ເລີ່ມປົກຄອງເໜືອ ອິສຣາເອນ ໃນ ຊາມາເຣຍ ແລະໄດ້ປົກຄອງຢູ່ຊາວປີ 28ພະອົງໄດ້ເຮັດ
ສິ່ງທີ່ຊົ່ວຮ້າຍໃນສາຍພຣະເນດຂອງ ພຣະຜູ້ເປັນເຈົ້າ ພະອົງບໍ່ໄດ້ຫັນໜີຈາກບາບທັງຫລາຍ
ຂອງ ເຢໂຣໂບອາມ ລູກຊາຍ ເນບັດ ຊຶ່ງໄດ້ເຮັດໃຫ້ອິສຣາເອນ ເຮັດບາບດ້ວຍ 29ໃນລາຊະ-
ການຂອງ ເປກາ ກະສັດຂອງ ອິສຣາເອນ ຕິກລາດປີເລເຊກະສັດຂອງ ອັດຊີເຣຍ ໄດ້ຍົກທັບມາ
ແລະ ຢຶດເອົາເມືອງອີໂຢນ, ອາເບັນ-ເບັດ-ມາອະກາ, ຢາໂນອາ, ເກເດັດ, ຮາໂຊ, ກີເລອາດ,
ຄາລີເລ ແຜ່ນດິນ ນັບທາລີທັງໝົດ ແລະກວາດປະຊາຊົນໄປເປັນຊະເລີຍໃນ ອັດຊີເຣຍ 30ແລ້ວ
ໂຮເຊອາ ລູກຊາຍ ເອລາ ໄດ້ຮ່ວມກັນຄິດກະບົດຕໍ່ ເປກາ ລູກຊາຍ ເຣມາລີຢາ ແລະໂຄ່ນລົ້ມພະ
ອົງລົງ ແລະໄດ້ປະຫານພະອົງ ແລະຂຶ້ນປົກຄອງແທນ ໃນປີທີຊາວຂອງລາຊະການ ໂຢທາມ
ລູກຊາຍຂອງ ອຸດຊີຢາ (ອາຊາລີຢາ).

[31]ລາຊະກິດຕ່າງໆຂອງ ເປກາ ແລະບັນດາສິ່ງທີ່ພະອົງໄດ້ເຮັດກໍໄດ້ບັນທຶກໄວ້ໃນໜັງສືຂ່າວ
ຄາວຂອງກະສັດ ອິສຣາເອນ.

## ໂຢທາມປົກຄອງເໜືອຢູດາ[ກ]

[32]ໃນປີທີສອງຂອງລາຊະການ ເປກາ ລູກຊາຍ ເຣມາລີຢາ ກະສັດຂອງ ອິສຣາເອນ ໂຢທາມ
ລູກຊາຍຂອງ ອຸດຊີຢາ (ອາຊາລີຢາ) ກະສັດຂອງຢູດາ ໄດ້ເລີ່ມປົກຄອງ [33]ເມື່ອພະອົງເລີ່ມປົກ-
ຄອງນັ້ນມີອາຍຸຊາວຫ້າປີ, ພະອົງໄດ້ປົກຄອງໃນ ເຢຣູຊາເລັມ ສິບຫົກປີແມ່ຂອງພະອົງມີຊື່ວ່າ
ນາງ ເຢຣຸຊາ ລູກສາວຂອງ ຊາໂດກ [34]ພະອົງໄດ້ເຮັດສິ່ງທີ່ສັດຊື່ໃນສາຍພຣະເນດຂອງ ພຣະຜູ້-
ເປັນເຈົ້າ ຕາມທຸກຢ່າງທີ່ ອຸດຊີຢາ ພໍ່ຂອງພະອົງໄດ້ເຮັດມາ [35]ເຖິງປານນັ້ນ ປູຊະນີຍະສະຖານ
ສູງກໍຍັງບໍ່ໄດ້ຖືກກຳຈັດອອກໄປ ປະຊາຊົນຍັງຖວາຍບູຊາ ແລະ ເຜົາເຄື່ອງຫອມເທິງປູຊະນີ-
ຍະສະຖານສູງນັ້ນ, ພະອົງໄດ້ສ້າງປະຕູເທິງຂອງພຣະວິຫານຂອງ ພຣະຜູ້ເປັນເຈົ້າ.
[36]ລາຊະກິດຕ່າງໆຂອງ ໂຢທາມ ແລະບັນດາສິ່ງທີ່ພະອົງໄດ້ເຮັດກໍໄດ້ບັນທຶກໄວ້ໃນໜັງສື
ຂ່າວຄາວຂອງກະສັດປະເທດຢູດາ [37]ໃນການນັ້ນ ພຣະຜູ້ເປັນເຈົ້າໄດ້ໃຊ້ ເຣຊິນ ກະສັດຂອງຊີ-
ເຣຍ ແລະ ເປກາ ລູກຊາຍ ເຣມາລີຢາ ໃຫ້ມາຕໍ່ສູ້ກັບ ຢູດາ [38]ໂຢທາມ ໄດ້ລ່ວງລັບໄປຢູ່ກັບບັນ-
ພະບູລຸດຂອງພະອົງ ແລະໄດ້ຝັງສົບໄວ້ກັບບັນພະບູລຸດຂອງພະອົງໃນເມືອງ ດາວິດ ແລະ ອາ-
ຮາດ ລູກຊາຍຂອງພະອົງຂຶ້ນປົກຄອງແທນ.

# ບົດທີ 16

## ອາຮາດປົກຄອງເໜືອຢູດາ[ຂ]

[1]ໃນປີທີສິບເຈັດຂອງລາຊະການ ເປກາ ລູກຊາຍ ເຣມາລີຢາ ອາຮາດ ລູກຊາຍຂອງ ໂຢທາມ
ກະສັດຂອງຢູດາ ໄດ້ເລີ່ມຂຶ້ນປົກຄອງ [2]ອາຮາດ ມີອາຍຸຊາວປີເມື່ອພະອົງໄດ້ເລີ່ມປົກຄອງ ແລະ
ພະອົງໄດ້ປົກຄອງໃນເມືອງ ເຢຣູຊາເລັມ ສິບຫົກປີ ພະອົງບໍ່ໄດ້ເຮັດສິ່ງທີ່ສັດຊື່ໃນສາຍພຣະເນດ
ຂອງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງພະອົງ ເໝືອນດັ່ງ ດາວິດ ບັນພະບູລຸດຂອງພະອົງໄດ້ເຮັດມາ
[3]ແຕ່ພະອົງໄດ້ດຳເນີນຕາມທາງຂອງກະສັດ ແຫ່ງ ອິສຣາເອນ ເຖິງກັບໄດ້ຖວາຍລູກຊາຍຂອງ
ພະອົງເອງເຜົາໃນໄຟ ຕາມການເຮັດອັນໜ້າກຽດຊັງຂອງ ປະຊາຊາດ ຊຶ່ງ ພຣະຜູ້ເປັນເຈົ້າໄດ້
ຂັບໄລ່ໜີຕໍ່ໜ້າລູກຫລານ ອິສຣາເອນ ແລ້ວ [4]ພະອົງໄດ້ຖວາຍສັດບູຊາ ແລະເຜົາເຄື່ອງຫອມເທິງ
ປູຊະນີຍະສະຖານສູງ, ໃນເນີນສູງ ແລະກ້ອງຕົ້ນໄມ້ສີຂຽວສົດທຸກຕົ້ນ.

## ຊີເຣຍກັບອິສຣາເອນບຸກລຸກ[ຂ]

[5]ແລ້ວ ເຣຊິນ ກະສັດຂອງຊີເຣຍ ແລະ ເປກາ ລູກຊາຍ ເຣມາລີຢາ ກະສັດຂອງ ອິສຣາເອນ ໄດ້
ຍົກທັບຂຶ້ນມາເຮັດສົງຄາມກັບເມືອງ ເຢຣູຊາເລັມ ແລະກະສັດທັງສອງໄດ້ອ້ອມ ອາຮາດ ໄວ້ ແຕ່
ເອົາໄຊຊະນະຍັງບໍ່ໄດ້ [6]ຄາວນັ້ນ ເຣຊິນ ກະສັດຂອງຊີເຣຍ ໄດ້ເຂົ້າຍຶດເມືອງ ເອລັດ ຄືນໃຫ້ຊີເຣຍ
ແລະໄດ້ຂັບໄລ່ພວກຢິວ ອອກຈາກ ເອລັດ ຄົນຊີເຣຍ ໄດ້ເຂົ້າໄປຢູ່ ເອລັດ ແລະຢູ່ບ່ອນນັ້ນຈົນ

---
[ກ]2ຂຄວ 26:23 [ຂ]2ຂຄວ 28:1
[ຂ]ໂຈມຕີ ຢູດາ 2ຂຄວ 28:58

ເຖິງທຸກມື້ນີ້ 7ອາຮາດ ໄດ້ສົ່ງຜູ້ສົ່ງຂ່າວໄປຫາ ຕິກລັດ-ປີເລເສ ກະສັດ ແຫ່ງ ອັດຊີເຣຍ ວ່າ “ຂ້າ-
ພະເຈົ້າເປັນຄົນໃຊ້ຂອງພະອົງ ແລະ ເປັນລູກຂອງພະອົງ, ຂໍເຊີນຂຶ້ນມາຊ່ວຍຂ້າພະເຈົ້າໃຫ້ພົ້ນ
ຈາກມືຂອງກະສັດຊີເຣຍ ແລະຈາກມືຂອງກະສັດອິສຣາເອນຜູ້ຊຶ່ງລຸກຂຶ້ນຕໍ່ສູ້ຂ້າພະເຈົ້າ” 8ອາ-
ຮາດ ໄດ້ນຳເອົາເງິນ ແລະຄຳຊຶ່ງມີຢູ່ໃນພຣະວິຫານຂອງ ພຣະຜູ້ເປັນເຈົ້າ ແລະໃນຄັງສຳນັກ
ພະລາຊະວັງ ສົ່ງເປັນຂອງຂວັນຖວາຍແກ່ກະສັດຂອງ ອັດຊີເຣຍ 9ກະສັດ ອັດຊີເຣຍກໍໄດ້ຟັງພະ
ອົງ ຈຶ່ງໄດ້ຍົກທັບຂຶ້ນໄປ ດາມາເຊ ແລະຈັບປະຊາຊົນເມືອງນັ້ນໄປເປັນຊະເລີຍໃນເມືອງ ກີເຣ
ແລະໄດ້ປະຫານ ເຣຊີນ.

10ເມື່ອກະສັດ ອາຮາດ ສະເດັດໄປ ດາມາເຊ ເພື່ອພົບກັບ ຕິກລາດປີເລເຊກະສັດ ແຫ່ງ ອັດຊີ-
ເຣຍ ກໍໄດ້ເຫັນແທ່ນບູຊາທີ່ ດາມາເຊ ແລະກະສັດ ອາຮາດ ໄດ້ສົ່ງແບບແທ່ນບູຊາໄປຫາ ອູຣີຢາ
ປະໂລຫິດພ້ອມທັງ ແບບແຜນຕາມລັກສະນະການກໍ່ສ້າງ 11ປະໂລຫິດ ອູຣີຢາ ກໍໄດ້ສ້າງ ແທ່ນບູ-
ຊານັ້ນຕາມແບບຢ່າງທຸກປະການຊຶ່ງກະສັດ ອາຮາດ ໄດ້ສົ່ງມາຈາກ ດາມາເຊ, ອູຣີຢາ ຈຶ່ງໄດ້ສ້າງ
ແທ່ນບູຊານັ້ນກ່ອນທີ່ກະສັດ ອາຮາດ ກັບຈາກ ດາມາເຊ 12ແລະເມື່ອກະສັດກັບຈາກ ດາມາເຊ ມາ
ແລ້ວ ກະສັດກໍໄດ້ເຫັນ ແທ່ນບູຊາ ແລ້ວກະສັດໄດ້ເຂົ້າມາໃກ້ແທ່ນບູຊາແລະ ໄດ້ຖວາຍເທິງ
ແທ່ນນັ້ນ 13ແລະ ໄດ້ ເຜົາ ເຄື່ອງບູຊາຂອງພະອົງ ແລະ ເຄື່ອງບູຊາທີ່ ເປັນພືດຜົນຂອງພະອົງ
ແລະໄດ້ຖອກເຄື່ອງບູຊາ ແລະເຄື່ອງດື່ມ ແລະໄດ້ຊິດເລືອດເຄື່ອງບູຊາເພື່ອຄວາມສາມັກຄີທຳ
ຂອງພະອົງລົງເທິງ ແທ່ນນັ້ນ 14ພະອົງໄດ້ຍ້າຍແທ່ນບູຊາທອງເຫລືອງ ຊຶ່ງຢູ່ຕໍ່ພຣະພັກ ພຣະຜູ້-
ເປັນເຈົ້າ ອອກຈາກໜ້າພຣະວິຫານ ຈາກສະຖານທີ່ລະຫວ່າງ ແທ່ນບູຊາ ແລະພຣະວິຫານຂອງ
ພຣະຜູ້ເປັນເຈົ້າ ແລະຕັ້ງໄວ້ທາງດ້ານເໜືອຂອງ ແທ່ນບູຊານັ້ນ 15ກະສັດ ອາຮາດ ໄດ້ສັ່ງກັບ
ປະໂລຫິດ ອູຣີຢາ ວ່າ “ເທິງແທ່ນໃຫຍ່ນີ້ທ່ານຈົ່ງເຜົາເຄື່ອງ ເຄື່ອງບູຊາໃນຕອນເຊົ້າແລະເຄື່ອງ
ບູຊາທີ່ ເປັນພືດຜົນໃນຕອນແລງ ແລະ ເຄື່ອງ ເຜົາບູຊາຂອງກະສັດແລະເຄື່ອງທັນຍະບູຊາຂອງ
ພະອົງພ້ອມກັບເຄື່ອງເຜົາບູຊາຂອງປະຊາຊົນ ເຄື່ອງບູຊາພືດຜົນເປັນເມັດຂອງພວກເຂົາ ແລະ
ເຄື່ອງດື່ມບູຊາຂອງພວກເຂົາ ແລະຈົ່ງເອົາເລືອດທັງໝົດຈາກເຄື່ອງເຜົາ ບູຊາ ແລະເລືອດທັງ
ໝົດຈາກ ເຄື່ອງສັດບູຊາມາຊິດ ເທິງ ແທ່ນນີ້ ແລະ ແທ່ນບູຊາທອງເຫລືອງ ໃຫ້ເປັນບ່ອນສຳລັບ
ທ່ານທີ່ຈະທູນຖາມ ພຣະເຈົ້າ 16ປະໂລຫິດ ອູຣີຢາ ໄດ້ເຮັດການ ເຫລົ່ານີ້ທັງໝົດຕາມຄຳສັ່ງຂອງ
ກະສັດ ອາຮາດ.

17ແລະກະສັດ ອາຮາດ ໄດ້ເອົາແຜ່ນຈາກຕີນຊາມທັງຫລາຍອອກໄປ ແລະໄດ້ເອົາຂັນທີ່ຢູ່ທາງ
ເທິງນັ້ນອອກໄປຈາກແທ່ນ ແລະໄດ້ເອົາຂັນໃຫຍ່ລົງມາຈາກຮູບງົວທອງເຫລືອງທີ່ຮອງຢູ່ນັ້ນ
ວາງໄວ້ເທິງພື້ນກ້ອນຫີນ 18ໃນວິຫານຂອງ ພຣະຜູ້ເປັນເຈົ້າ ພະອົງໄດ້ປ່ຽນປະຕູສະບາໂຕທີ່ກໍ່-
ສ້າງໄວ້ໃນວິຫານ ແລະປະຕູຊັ້ນນອກສຳລັບກະສັດນັ້ນ ພະອົງໄດ້ປ່ຽນປະຕູອອກ ເພາະເຫັນ-
ແກ່ກະສັດຂອງ ອັດຊີເຣຍ.

## ອາຮາດຕາຍ ກະສັດເຮເຊກີຢາຂຶ້ນປົກຄອງແທນ[ກ]

19ລາຊະກິດຕ່າງໆຂອງ ອາຮາດ ທີ່ພະອົງໄດ້ເຮັດ ກໍໄດ້ບັນທຶກໄວ້ໃນໜັງສືຂ່າວຄາວຂອງ

[ກ]2ຂຄວ 28:26–27

ກະສັດປະເທດຢູດາ 20ແລະອາຮາດໄດ້ລ່ວງລັບໄປຢູ່ກັບບັນພະບູລຸດຂອງຕົນ ພວກເຂົາຝັງສົບ
ໄວ້ກັບບັນພະບູລຸດຂອງພະອົງໃນເມືອງ ດາວິດ ແລະເຮເຊກີຢາລູກຊາຍຂອງພະອົງຂຶ້ນປົກ-
ຄອງແທນ.

# ບົດທີ 17

## ກຸງຊາມາເຣຍລົ້ມທະລາຍ ແລະຊາວອິສຣາເອນຖືກກວາດເປັນຊະເລີຍ

1ໃນລາຊະການປີທີສິບສອງຂອງເຈົ້າອາຮາດເຈົ້າຊີວິດແຫ່ງຢູດາ ໂຮເຊອາລູກຊາຍຂອງ
ເອລາ ໄດ້ຂຶ້ນເປັນເຈົ້າຊີວິດປະເທດອິສຣາເອນ ແລະປົກຄອງກຸງຊາມາເຣຍຢູ່ເກົ້າປີ. 2ພະອົງ
ໄດ້ເຮັດຜິດຕໍ່ພຣະຜູ້ເປັນເຈົ້າ ແຕ່ກໍຍັງບໍ່ເທົ່າກັບບັນດາເຈົ້າຊີວິດທີ່ປົກຄອງອິສຣາເອນອົງ
ກ່ອນໆ. 3ເຈົ້າຊີວິດຊັນມັນເນເສ ແຫ່ງອັດຊີເຣຍໄດ້ເຮັດເສິກຕໍ່ສູ້ພະອົງ ຝ່າຍໂຮເຊອາຈຶ່ງ
ຍອມຢູ່ໃຕ້ອຳນາດ ແລະເສຍສ່ວຍໃຫ້ທຸກໆປີ. 4ແຕ່ຢູ່ມາ ໂຮເຊອາໄດ້ທໍລະຍົດຕໍ່ອັດຊີເຣຍ ຄື
ພະອົງໄດ້ສົ່ງທູດໄປຫາເຈົ້າຊີວິດແຫ່ງເອຢິບ ແລະບໍ່ຍອມເສຍສ່ວຍປະຈຳປີໃຫ້ອັດຊີເຣຍ ເມື່ອ
ຊັນມັນເນເສຮູ້ຂ່າວ ພະອົງກໍຈັບໂຮເຊອາໄປຂັງຄຸກໄວ້. 5ແລ້ວຊັນມັນເນເສເຈົ້າຊີວິດແຫ່ງ
ອັດຊີເຣຍໄດ້ບຸກເຂົ້າໂຈມຕີປະເທດອິສຣາເອນ ແລະໄດ້ອ້ອມເມືອງຊາມາເຣຍໄວ້ເປັນເວລາ
ສາມປີ. 6ໃນປີທີເກົ້າຂອງລາຊະການ ເຈົ້າໂຮເຊອາ ເຈົ້າຊີວິດອັດຊີເຣຍໄດ້ຍຶດເອົາກຸງຊາມາ-
ເຣຍ ແລະ ນຳເອົາຊາວອິສຣາເອນ ໄປເປັນຊະເລີຍທີ່ອັດຊີເຣຍ ພະອົງໃຫ້ບາງຄົນໃນພວກ
ເຂົາອາໄສຢູ່ທີ່ເມືອງຮາລາ ຢູ່ໃກ້ແມ່ນ້ຳຮາໂບໃນເຂດໂກຊານ ແລະຢູ່ໃນເມືອງຂອງຊາວເມ-
ເດຍ.

7ກຸງຊາມາເຣຍ ຫລົ້ມຈົມກໍຍ້ອນຊາວອິສຣາເອນເຮັດຜິດຕໍ່ພຣະຜູ້ເປັນເຈົ້າຂອງພວກເຂົາ
ຜູ້ຊົງນຳພວກເຂົາອອກຈາກປະເທດເອຢິບ ຈາກກຳມືຂອງຟາຣາໂອ ເຈົ້າຊີວິດແຫ່ງເອຢິບ ຄື
ພວກເຂົາໄປຂາບໄຫວ້ພະອື່ນ. 8ແລະເຮັດຕາມປະເພນີຂອງຊົນຊາດທີ່ພຣະຜູ້ເປັນເຈົ້າຊົງຂັບ
ໄລ່ໜີໄປຈາກພວກເຂົາ ແລະຖືທຳນຽມທີ່ປະດິດຄິດຂຶ້ນໂດຍບັນດາກະສັດອິສຣາເອນ. 9ພວກ
ອິສຣາເອນໄດ້ພາກັນເຮັດໃນສິ່ງທີ່ ພຣະຜູ້ເປັນເຈົ້າບໍ່ປາດຖະໜາ ພວກເຂົາໄດ້ສ້າງບ່ອນນະ-
ມັດສະການໄວ້ເທິງບ່ອນສູງທົ່ວເມືອງຂອງພວກເຂົາ ຕັ້ງແຕ່ໝູ່ບ້ານນ້ອຍໆ ຮອດໝູ່ບ້ານໃຫຍ່.
10ພວກເຂົາໄດ້ຕັ້ງເສົາສັກສິດ ແລະຮູບພະອາເຊຣາໄວ້ເທິງພູສູງທຸກໜ່ວຍ ແລະຢູ່ກ້ອງຕົ້ນໄມ້
ໃຫຍ່ທຸກແຫ່ງ. 11ພວກເຂົາຖວາຍບູຊາຢູ່ຕາມບ່ອນເຫລົ່ານີ້ ຕາມແບບຂອງຊົນຊາດທີ່ພຣະຜູ້-
ເປັນເຈົ້າຊົງໄລ່ໜີໄປຈາກພວກເຂົານັ້ນ ແລະພວກເຂົາໄດ້ເຮັດໃນສິ່ງທີ່ຊົ່ວຮ້າຍ ຊຶ່ງເປັນການ
ກະທຳໃຫ້ພຣະຜູ້ເປັນເຈົ້າຊົງພຣະພິໂລດ. 12ພວກເຂົາຂາບໄຫວ້ຮູບເຄົາລົບຊຶ່ງເປັນການຂືນຄຳ
ສັ່ງຂອງພຣະຜູ້ເປັນເຈົ້າ.

13ພຣະຜູ້ເປັນເຈົ້າຊົງສັ່ງພວກຜູ້ສົ່ງຂ່າວ ແລະພວກຜູ້ປະກາດພຣະຄຳໄປເຕືອນພວກອິສຣາ-
ເອນ ແລະ ພວກຢູດາວ່າ, “ຈົ່ງຫັນໜີຈາກທາງຊົ່ວ ແລະຖືຮັກສາຄຳສັ່ງຂອງເຮົາ ຕາມບົດ
ບັນຍັດທີ່ເຮົາໄດ້ໃຫ້ໄວ້ແກ່ປູ່ຍ່າຕາຍາຍຂອງພວກເຈົ້າ ເຮົາໄດ້ໃຫ້ບົດບັນຍັດນີ້ແກ່ພວກເຈົ້າ
ໂດຍຜ່ານຜູ້ຮັບໃຊ້ຂອງເຮົາ ຄື ຜູ້ປະກາດພຣະຄຳ.” 14ແຕ່ພວກເຂົາບໍ່ຟັງ ພວກເຂົາດື້ດ້ານ

ເໝືອນດັ່ງປູ່ຍ່າຕາຍາຍຂອງພວກເຂົາ ທີ່ບໍ່ມີຄວາມເຊື່ອໃນ ພຣະຜູ້ເປັນເຈົ້າ ຂອງພວກເຂົາ.
15ພວກເຂົາໄດ້ປະຖິ້ມຄຳສັ່ງສອນ ແລະຄຳໝັ້ນສັນຍາທີ່ພຣະອົງຊົງມີໄວ້ກັບປູ່ຍ່າຕາຍາຍຂອງ
ພວກເຂົາ ແລະທັງຄຳເຕືອນທີ່ພຣະອົງຊົງເຕືອນພວກເຂົາ ພວກເຂົາຂາບໄຫວ້ຮູບເຄົາລົບທີ່ໄຮ້
ສາລະຈົນກາຍເປັນຜູ້ທີ່ອັບປະຍົດ ພວກເຂົາຕິດຕາມແບບຢ່າງຂອງຊົນຊາດທີ່ຢູ່ອ້ອມຮອບເຂົາ
ຊຶ່ງ ພຣະຜູ້ເປັນເຈົ້າ ຊົງສັ່ງພວກເຂົາແລ້ວວ່າ ບໍ່ໃຫ້ເຮັດຄືຊົນຊາດເຫລົ່ານັ້ນ. 16ພວກເຂົາປະຖິ້ມ
ຂໍ້ຄຳສັ່ງທຸກຢ່າງຂອງ ພຣະຜູ້ເປັນເຈົ້າ ຜູ້ຊົງເປັນ ພຣະເຈົ້າ ຂອງພວກເຂົາ ແລະໄດ້ໃຊ້ໂລຫະ
ຫລໍ່ເປັນຮູບງົວສອງໂຕຂຶ້ນເປັນບ່ອນສັກກາລະບູຊາ ໄດ້ເຮັດຫລັກສັກສິດ ໄດ້ນະມັດສະການ
ດວງດາວຕະຫລອດທັງຮັບໃຊ້ພະບາອານ. 17ພວກເຂົາເອົາລູກຊາຍ ແລະລູກສາວມາຖວາຍບູ-
ຊາ ພວກເຂົາດູມໍ ແລະຕັ້ງໜ້າຕັ້ງຕາເຮັດໃນສິ່ງທີ່ຊົ່ວຊ້າຕໍ່ສາຍພຣະເນດຂອງ ພຣະຜູ້ເປັນເຈົ້າ
ຊຶ່ງເປັນການຍົວະເຍົ້າໃຫ້ພຣະອົງຊົງພຣະພິໂລດ.

18ດ້ວຍເຫດນີ້ ພຣະຜູ້ເປັນເຈົ້າ ຊົງພຣະພິໂລດພວກອິສຣາເອນ ແລະຊົງຂັບໄລ່ພວກເຂົາໜີ
ຈາກພຣະພັກຂອງພຣະອົງ ໂດຍຈົ່ງໄວ້ແຕ່ຄົນໃນລາຊະອານາຈັກຢູດາ ເທົ່ານັ້ນ. 19ຊາວຢູດາ
ບໍ່ຖືຮັກສາຂໍ້ຄຳສັ່ງຂອງ ພຣະຜູ້ເປັນເຈົ້າ ເຊັ່ນດຽວກັນ ພວກເຂົາປະຕິບັດຕາມຮີດຄອງປະເພນີ
ຂອງພວກອິສຣາເອນ. 20ດັ່ງນັ້ນ ພຣະຜູ້ເປັນເຈົ້າ ຈຶ່ງຊົງປະຖິ້ມຊາວອິສຣາເອນທຸກຄົນ ພຣະ-
ອົງຊົງເຮັດໃຫ້ພວກເຂົາຫລົ້ມຈົມ ແລະ ຊົງມອບພວກເຂົາໄວ້ໃນກຳມືຂອງພວກສັດຕູຜູ້ໂຫດ-
ຮ້າຍ ຈົນໃນທີ່ສຸດ ພຣະອົງກໍຊົງຂັບໄລ່ພວກເຂົາໜີໃຫ້ໄກຈາກພຣະພັກຂອງພຣະອົງ. 21ຫລັງ
ຈາກ ພຣະຜູ້ເປັນເຈົ້າ ໄດ້ຊົງແຍກອິສຣາເອນອອກຈາກຢູດາ ແລ້ວ ພວກອິສຣາເອນກໍໄດ້ແຕ່ງ-
ຕັ້ງ ເຢໂຣໂບອາມ ລູກຊາຍຂອງ ເນບັດ ໃຫ້ເປັນເຈົ້າຊີວິດ ເຢໂຣໂບອາມ ໄດ້ຊັກຊວນຊາວອິ-
ສຣາເອນ ໃຫ້ປະ ພຣະຜູ້ເປັນເຈົ້າ ແລະນຳພວກເຂົາເຮັດຄວາມຜິດຢ່າງຮ້າຍແຮງ. 22ພວກອິ-
ສຣາເອນ ເປັນເໝືອນດັ່ງ ເຢໂຣໂບອາມ ແລະໄດ້ເຮັດຄວາມຜິດບາບນັ້ນຕໍ່ໄປ. 23ຈົນຜົນສຸດ
ທ້າຍ ພຣະຜູ້ເປັນເຈົ້າ ຊົງຂັບໄລ່ພວກເຂົາໜີໃຫ້ໄກຈາກພຣະພັກຂອງພຣະອົງ ຕາມທີ່ພຣະອົງ
ຊົງບອກຜ່ານມາທາງພວກຜູ້ປະກາດພຣະຄຳ ຊຶ່ງເປັນຜູ້ຮັບໃຊ້ຂອງພຣະອົງ ພຣະອົງຊົງກວາດ
ເອົາພວກອິສຣາເອນ ຈາກບ້ານເກີດເມືອງນອນຂອງພວກເຂົາ ໄປເປັນຊະເລີຍທີ່ປະເທດອັດຊີ-
ເຣຍ ຈົນເຖິງເທົ່າທຸກມື້ນີ້.

## ການປະຕິບັດຕົນຂອງພວກທີ່ເຂົ້າເປັນພົນລະເມືອງຊາມາເຣຍ

24ເຈົ້າຊີວິດ ອັດຊີເຣຍ ໄດ້ນຳປະຊາຊົນຈາກຫົວເມືອງຕ່າງໆ ໃນປະເທດ ບາບີໂລນ ຄື ກຸທາ
ອາວາ ຮາມັດ ແລະ ເສຟາວາຢິມ ມາຢູ່ໃນປະເທດຊາມາເຣຍ ແທນພວກອິສຣາເອນ ພວກ
ເຂົາໄດ້ເຂົ້າມາຄອບຄອງ ແລະອາໄສຢູ່ຕາມຫົວເມືອງຕ່າງໆ. 25ຕອນທີ່ພວກເຂົາມາຢູ່ໃໝ່
ພວກເຂົາບໍ່ໄດ້ນະມັດສະການ ພຣະຜູ້ເປັນເຈົ້າ ດັ່ງນັ້ນ ພຣະອົງຈຶ່ງຊົງສັ່ງຝູງສິງມາກັດກິນພວກ
ເຂົາເປັນຈຳນວນຫລາຍ. 26ພວກເຂົາຈຶ່ງໄດ້ທູນຕໍ່ເຈົ້າຊີວິດຂອງ ອັດຊີເຣຍ ວ່າ ຊົນຊາດທີ່ພະອົງ
ໃຫ້ມາອາໄສຢູ່ໃນເມືອງ ອັດຊີເຣຍ ບໍ່ຮູ້ຈັກພິທີນະມັດສະການພະປະຈຳປະເທດ. 27ພະນັ້ນ ຈຶ່ງ
ສົ່ງສິງມາກັດກິນພວກເຂົາ ແລ້ວເຈົ້າຊີວິດ ອັດຊີເຣຍ ຈຶ່ງໄດ້ຊົງອອກຄຳສັ່ງວ່າ, “ຈົ່ງສັ່ງປະໂລ-
ຫິດຜູ້ໜຶ່ງ ທີ່ຕົກເປັນຊະເລີຍຂອງເຮົານັ້ນ ໃຫ້ໄປສອນພິທີນະມັດສະການພະປະຈຳປະເທດໃຫ້

ແກ່ພວກເຂົາ.” 28ສະນັ້ນ ປະໂລຫິດຜູ້ໜຶ່ງ ໃນຈຳນວນພວກທີ່ຖືກກວາດມາແຕ່ຊາມາເຣຍກໍໄປ
ຢູ່ເມືອງ ເບັດເອນ ແລະໄດ້ສອນວິທີນະມັດສະການ ພຣະຜູ້ເປັນເຈົ້າ ໃຫ້ແກ່ພວກເຂົາ.

29ແຕ່ວ່າ ພວກເຂົາຍັງຄົງສ້າງຮູບເຄົາລົບເປັນພະຂອງແຕ່ລະຊົນຊາດຢູ່ ພວກເຂົາໄດ້ເອົາ
ຮູບເຄົາລົບໄວ້ໃນບ່ອນສັກສິດ ທີ່ຊາວຊາມາເຣຍໄດ້ກໍ່ສ້າງໄວ້ ພວກເຂົາໄດ້ເຮັດເຊັ່ນນີ້ໃນທຸກໆ
ຫົວເມືອງທີ່ພວກເຂົາອາໄສຢູ່. 30ຊາວເມືອງ ບາບີໂລນ ໄດ້ສ້າງຮູບພະ ສຸກໂກດ-ເບໂນດ ຊາວ
ເມືອງ ກຸທາ ໄດ້ສ້າງຮູບພະ ເນການ ຊາວເມືອງ ຮາມັດ ໄດ້ສ້າງຮູບພະ ອາຊີມາ. 31ຊາວເມືອງ
ອາວາ ໄດ້ສ້າງຮູບ ພະນິບຮັດ ແລະ ພະຕາຕັກ ສ່ວນຊາວ ເສຟາວາຢິມ ໄດ້ເຜົາລູກຂອງຕົນ
ຖວາຍບູຊາຮູບ ພະອັດຣຳເມເລັກ ແລະຮູບ ພະອານຳເມເລັກ ຊຶ່ງເປັນພະຂອງຊາວ ເສຟາວາ-
ຢິມ. 32ແຕ່ພວກເຂົາເຫລົ່ານີ້ກໍນະມັດສະການ ພຣະຜູ້ເປັນເຈົ້າຄືກັນ ແລະພວກເຂົາໄດ້ແຕ່ງຕັ້ງ
ກັນໃນພວກເຂົາເອງໃຫ້ເປັນປະໂລຫິດປະຈຳບ່ອນສັກສິດ ເພື່ອຖວາຍເຄື່ອງບູຊາຢູ່ທີ່ນັ້ນ.
33ພວກເຂົານະມັດສະການ ພຣະຜູ້ເປັນເຈົ້າ ທັງໄດ້ຮັບໃຊ້ພະຂອງພວກເຂົາ ຕາມຮີດຄອງຂອງ
ປະເທດທີ່ພວກເຂົາເຄີຍຢູ່ມາກ່ອນນັ້ນ.

34ທຸກມື້ນີ້ ພວກເຂົາຍັງຄົງປະຕິບັດຕາມຮີດຄອງເກົ່າຢູ່ໂດຍບໍ່ໄດ້ນະມັດສະການ ພຣະຜູ້ເປັນ-
ເຈົ້າ ແລະບໍ່ໄດ້ປະຕິບັດຕາມພຣະຄຳ ຫລືກົດຂໍ້ຄຳສັ່ງທີ່ ພຣະຜູ້ເປັນເຈົ້າ ຊົງມີໄວ້ແກ່ເຊື້ອສາຍ
ຂອງຢາໂຄບ ຜູ້ຊຶ່ງພຣະອົງຊົງໃຫ້ຊື່ວ່າ ອິສຣາເອນ.

35ພຣະຜູ້ເປັນເຈົ້າ ຊົງເຮັດຄຳໝັ້ນສັນຍາກັບພວກເຂົາ ແລະສັ່ງພວກເຂົາວ່າ, “ພວກເຈົ້າບໍ່
ຕ້ອງຮັບໃຊ້ ບໍ່ຕ້ອງຂາບໄຫວ້ ຫລືຖວາຍບູຊາແກ່ພະອື່ນ ແຕ່ໃຫ້ພວກເຈົ້າຢຳເກງເຮົາ. 36ຜູ້ເປັນ
ພຣະຜູ້ເປັນເຈົ້າ ທີ່ໄດ້ນຳພວກເຈົ້າອອກມາຈາກປະເທດ ເອຢິບ ດ້ວຍອຳນາດອັນຍິ່ງໃຫຍ່ຂອງ
ເຮົາ. 37ພວກເຈົ້າຕ້ອງເຊື່ອຟັງພຣະທຳ ແລະກົດຂໍ້ຄຳສັ່ງທີ່ເຮົາໄດ້ຈາລຶກໄວ້ໃຫ້ແກ່ພວກເຈົ້າ.
38ພວກເຈົ້າບໍ່ຕ້ອງນະມັດສະການພະອື່ນ ຢ່າລືມຄຳໝັ້ນສັນຍາທີ່ເຮົາມີໄວ້ກັບພວກເຈົ້າ. 39ຈົ່ງ
ເຄົາລົບຢຳເກງເຮົາຜູ້ເປັນ ພຣະຜູ້ເປັນເຈົ້າ ຂອງພວກເຈົ້າ ແລະຈະໄຖ່ພວກເຈົ້າອອກຈາກອຳ-
ນາດຂອງພວກສັດຕູ.” 40ແຕ່ປະຊາຊົນເຫລົ່ານີ້ບໍ່ຍອມຟັງ ແລະຍັງຄົງປະຕິບັດຕາມຮີດຄອງເກົ່າ
ຢູ່. 41ສະນັ້ນ ພວກຊົນຊາດເຫລົ່ານີ້ ຈຶ່ງນະມັດສະການ ພຣະເຈົ້າ ພ້ອມທັງຮັບໃຊ້ຮູບເຄົາລົບ
ຂອງພວກເຂົາດ້ວຍທຸກມື້ນີ້ ພວກລູກຫລານເຫລັນຂອງພວກເຂົາ ຍັງສືບຕໍ່ປະຕິບັດຄືກັບພໍ່ແມ່
ຂອງພວກເຂົາຢູ່.

# ບົດທີ 18

## ລາຊະການຂອງເຈົ້າເຮເຊກີຢາ

1ໃນລາຊະການປີທີສາມຂອງ ໂຮເຊອາ ລູກຊາຍຂອງເອລາ ເຈົ້າຊີວິດແຫ່ງອິສຣາເອນ ເຮ-
ເຊກີຢາ ລູກຊາຍອາຮາດ ໄດ້ເປັນເຈົ້າຊີວິດຢູດາ. 2ເມື່ອພະອົງຂຶ້ນຄອງລາຊະສົມບັດ ຊົງມີອາ-
ຍຸຊາວຫ້າປີ ແລະຊົງປົກຄອງຢູ່ທີ່ກຸງ ເຢຣູຊາເລັມ ເປັນເວລາເກົ້າປີ ມານດາຂອງພະອົງຊື່ວ່າ
ອາບີ ເປັນລູກສາວຂອງ ເຊຄາຣີຢາ. 3ພະອົງປະພຶດທຸກສິ່ງຖືກຕາມນ້ຳພຣະໄທຂອງ ພຣະຜູ້-
ເປັນເຈົ້າ ດັ່ງດຽວກັນກັບ ດາວິດ ບັນພະບູລຸດທີ່ໄດ້ປະຕິບັດມາ. 4ພະອົງໄດ້ທຳລາຍບ່ອນສັກ-

ສິດໃນສະຖານທີ່ສູງສຸດ ໄດ້ທັບເສົາສັກສິດ ໄດ້ຕັດຫລັກໄມ້ສັກສິດ ແລະໄດ້ຕີຮູບງູທອງທີ່ໂມ-
ເຊໄດ້ຫລໍ່ຂຶ້ນ ງູທອງນີ້ມີຊື່ວ່າ ເນຮູຊະຕານ. 5ໃນສະໄໝນັ້ນ ພວກອິສຣາເອນໄດ້ບູຊາຮູບນັ້ນ
ເຈົ້າເຮເຊກີຢາໄດ້ວາງໃຈໃນພຣະຜູ້ເປັນເຈົ້າຂອງອິສຣາເອນ ບັນດາເຈົ້າຊີວິດແຫ່ງຢູດາທີ່ຂຶ້ນ
ຄອງລາຊະສົມບັດກ່ອນພະອົງ ຫລືຂຶ້ນຄອງລາຊະສົມບັດຫລັງພະອົງ ບໍ່ມີອົງໃດເທົ່າທຽມກັບ
ພະອົງໄດ້. 6ພະອົງມີຄວາມຈົງຮັກພັກດີຕໍ່ພຣະຜູ້ເປັນເຈົ້າຢ່າງບໍ່ລົດລະ ຊົງຖືຮັກສາຂໍ້ຄຳສັ່ງທີ່
ພຣະຜູ້ເປັນເຈົ້າໃຫ້ໄວ້ກັບໂມເຊ. 7ດັ່ງນັ້ນ ພຣະຜູ້ເປັນເຈົ້າຈຶ່ງຊົງສະຖິດຢູ່ກັບພະອົງ ແລະທຸກ
ສິ່ງທີ່ພະອົງອາສາເຮັດກໍສຳເລັດຜົນ ພະອົງໄດ້ກະບົດຕໍ່ສູ້ເຈົ້າຊີວິດອັດຊີເຣຍ ແລະບໍ່ຍອມເສຍ
ສ່ວຍໃຫ້. 8ຊົງປາບປາມພວກຟີລິດສະຕິນຕັ້ງແຕ່ໝູ່ບ້ານນ້ອຍໆ ຈົນເຖິງຫົວເມືອງໃຫຍ່ໆ
ຮ່ວມທັງເມືອງຄາຊາ ແລະທົ່ວທັງເຂດແດນນັ້ນ.

## ກອງທັບອັດຊີເຣຍຢຶດກຸງເຢຣູຊາເລັມ

9ໃນລາຊະການປີທີສີ່ຂອງເຈົ້າເຮເຊກີຢາ ຊຶ່ງເປັນລາຊະການປີທີເຈັດຂອງເຈົ້າໂຮເຊອາ
ລູກຊາຍຂອງເອລາ ເຈົ້າຊີວິດແຫ່ງອິສຣາເອນ ຊັນມັນເນເສ ເຈົ້າຊີວິດອັດຊີເຣຍ ໄດ້ບຸກລຸກ
ນະຄອນຊາມາເຣຍໂດຍໄດ້ປິດລ້ອມເມືອງໄວ້. 10ພາຍໃນສາມປີ ເຈົ້າຊີວິດອັດຊີເຣຍກໍຢຶດ
ເມືອງນີ້ໄດ້ ຊຶ່ງເປັນປີທີຫົກຂອງລາຊະການເຈົ້າເຮເຊກີຢາ ແລະເປັນປີທີເກົ້າຂອງລາຊະການ
ຂອງເຈົ້າໂຮເຊອາ ເຈົ້າຊີວິດແຫ່ງອິສຣາເອນ. 11ເຈົ້າຊີວິດອັດຊີເຣຍ ໄດ້ກວາດຕ້ອນເອົາປະ-
ຊາຊົນອິສຣາເອນໄປເປັນສະເລີຍທີ່ເມືອງອັດຊີເຣຍ ພະອົງໄດ້ໃຫ້ບາງຄົນໃນພວກເຂົາອາໄສຢູ່
ທີ່ເມືອງຮາລາ ແລະອີກພວກໜຶ່ງໃຫ້ຢູ່ໃກ້ແມ່ນ້ຳຮາໂບ ໃນເຂດໂກຊານ ແລະຢູ່ໃນເມືອງຂອງ
ຊາວເມເດຍ. 12ກຸງຊາມາເຣຍຫລົ້ມຈົມກໍເພາະວ່າ ພວກອິສຣາເອນບໍ່ເຊື່ອຟັງພຣະຜູ້ເປັນເຈົ້າ
ຂອງຕົນ ພວກເຂົາລະເມີດຄຳສັນຍາຄື ບໍ່ປະຕິບັດຕາມໂມເຊ ຜູ້ຮັບໃຊ້ຂອງພຣະຜູ້ເປັນເຈົ້າ
ໄດ້ບັ່ງໄວ້.

## ເຈົ້າເຊັນນາເກຣິບ ຍົກກອງທັບໄປບຸກນະຄອນເຢຣູຊາເລັມ

13ໃນລາຊະການປີທີສິບສີ່ຂອງເຈົ້າເຮເຊກີຢາ ເສັນນາເກຣິບ ເຈົ້າຊີວິດອັດຊີເຣຍ ໄດ້ໂຈມ
ຕີປ້ອມປ້ອງກັນເມືອງຕ່າງໆ ໃນປະເທດຢູດາ ແລະຍຶດເອົາໄວ້ໄດ້ສຳເລັດ. 14ແລ້ວເຮເຊກີຢາ
ເຈົ້າຊີວິດແຫ່ງຢູດາໄດ້ມີພະລາຊະສານໄປຍັງເຈົ້າຊີວິດອັດຊີເຣຍທີ່ເມືອງລາກິດວ່າ, "ຂ້າພະ-
ເຈົ້າໄດ້ເຮັດຜິດແລ້ວ ຂໍໃຫ້ເອີ້ນກອງທັບຖອນຄືນເສຍ ຂ້າພະເຈົ້າຍອມເສຍສ່ວຍຕາມທຸກສິ່ງທີ່
ທ່ານຕ້ອງການ" ເຈົ້າຊີວິດອັດຊີເຣຍໄດ້ຮຽກຮ້ອງເອົາເງິນສິບໂຕນ ແລະຄຳໜຶ່ງໂຕນຈາກເຮ-
ເຊກີຢາ ເຈົ້າຊີວິດແຫ່ງຢູດາ. 15ດັ່ງນັ້ນ ເຈົ້າເຮເຊກີຢາ ຈຶ່ງໄດ້ເອົາເງິນທັງໝົດຈາກພຣະວິ-
ຫານພຣະຜູ້ເປັນເຈົ້າ ແລະຈາກຄັງພະລາຊະວັງມອບໃຫ້. 16ພະອົງໄດ້ລອກເອົາຄຳຈາກປະຕູ
ພຣະວິຫານພຣະຜູ້ເປັນເຈົ້າ ແລະຈາກຂອບປ່ອງຢ້ຽມທີ່ພະອົງໄດ້ໂອບໄວ້ ແລ້ວສົ່ງໄປໃຫ້ເຈົ້າ
ຊີວິດອັດຊີເຣຍ.

17ເຈົ້າຊີວິດອັດຊີເຣຍໄດ້ສົ່ງກອງທັບໃຫຍ່ຈາກ ລາກິດ ໄປຕໍ່ສູ້ເຈົ້າຊີວິດເຮເຊກີຢາ ທີ່ນະ-
ຄອນເຢຣູຊາເລັມ ໂດຍການນຳຂອງນາຍທະຫານຜູ້ມີອຳນາດສາມທ່ານ ເມື່ອມາຮອດນະຄອນ
ເຢຣູຊາເລັມ ພວກເຂົາກໍຕັ້ງທີ່ໝັ້ນຢູ່ໃກ້ຮ່ອງນ້ຳເບື້ອງເໜືອ ຢູ່ທີ່ຖະໜົນໄປຫາບ່ອນຊັກຜ້າ.

[18]ແລ້ວພວກເຂົາກໍຖືກສົ່ງໄປຫາເຈົ້າ ເຮເຊກີຢາ ແລະໄດ້ມີຂ້າລາຊະການຊັ້ນຜູ້ໃຫຍ່ສາມທ່ານ
ອອກມາພົບພວກເຂົາຄື ເອລີຢາກີມ ລູກຊາຍຂອງ ຮິນກີຢາ ຜູ້ຮັບຜິດຊອບໃນພະລາຊະວັງ
ເຊັບນາ ພະລາຊະເລຂານຸການ ແລະ ໂຢອາ ລູກຊາຍຂອງ ອາສັບ ຜູ້ຊຶ່ງບັນທຶກລາຍງານວຽກທົ່ວ
ໄປ.

[19]ຜູ້ໜຶ່ງໃນບັນດານາຍທະຫານ ອັດຊີເຣຍ ເວົ້າຕໍ່ບຸກຄົນທັງສາມວ່າ, “ເຈົ້າຊີວິດອົງຍິ່ງໃຫຍ່
ແຫ່ງ ອັດຊີເຣຍ ມີພະປະສົງຢາກຈະຮູ້ວ່າ ດ້ວຍເຫດໃດເຈົ້າ ເຮເຊກີຢາ ຈຶ່ງມີຄວາມເຊື່ອໝັ້ນໃນ
ພຣະໄທແທ້. [20]ເພິ່ນຄິດວ່າຄຳເວົ້ານັ້ນເປັນຍຸດທະສາດ ແລະກຳລັງທະຫານໄດ້ຊັ້ນບໍ? ພວກ
ເຂົາຄິດວ່າ ໃຜຈະເປັນຜູ້ຊ່ອຍໃນການກະບົດຕໍ່ຕ້ານເຮົາ. [21]ຂ້າພະເຈົ້າຮູ້ວ່າ ພວກທ່ານກຳລັງ
ອາໄສຢູ່ປະເທດ ເອຢິບ ຊຶ່ງເປັນປະເທດທີ່ຢຽດເໝືອນໄມ້ອໍ້ ທີ່ໃຊ້ເຮັດໄມ້ເທົ້າ ມີແຕ່ມັນຈະຫັກ
ແລະສຽບແທງມືຜູ້ທີ່ໃຊ້ ເຈົ້າຊີວິດແຫ່ງ ເອຢິບ ກໍປຽບເໝືອນດັ່ງທີ່ກ່າວມານີ້ແຫລະ.” [22]ນາຍທະ-
ຫານຜູ້ນັ້ນ ເວົ້າຕໍ່ໄປວ່າ, “ບາງທີທ່ານອາດຈະບອກຂ້າພະເຈົ້າວ່າ ພວກທ່ານ ເພິ່ງພາອາໄສ
ພຣະຜູ້ເປັນເຈົ້າ ຂອງພວກທ່ານ ແຕ່ເຈົ້າ ເຮເຊກີຢາ ເປັນຜູ້ທຳລາຍບ່ອນສັກສິດ ແລະແທ່ນບູ-
ຊາທັງໝົດ ທັງໄດ້ເວົ້າຕໍ່ປະຊາຊົນ ຢູດາ ແລະ ເຢຣູຊາເລັມ ໃຫ້ນະມັດສະການແທ່ນບູຊາໃນນະ-
ຄອນ ເຢຣູຊາເລັມ ເທົ່ານັ້ນ. [23]ຂ້າພະເຈົ້າຂໍທ້າທາຍຕໍ່ທ່ານດ້ວຍພະນາມຂອງເຈົ້າຊີວິດຂອງຂ້າ-
ພະເຈົ້າວ່າ ຄັນຂ້າພະເຈົ້າຈະເອົາມ້າໃຫ້ສອງພັນໂຕ ພວກທ່ານຈະຊອກຄົນມາຂີ່ໄດ້ບໍ? [24]ພວກ
ທ່ານນັ້ນ ແມ່ນແຕ່ຈະຕີກັບທະຫານຜູ້ນ້ອຍຂອງ ອັດຊີເຣຍ ກໍຍັງບໍ່ໄຫວແລ້ວ ປານນັ້ນຍັງຈະໃຫ້
ພວກ ເອຢິບ ສົ່ງລົດຮົບ ແລະທະຫານມ້າມາຊ່ອຍຢູ່ບໍ? [25]ພວກທ່ານຄົງຄິດວ່າ ພວກຂ້າພະເຈົ້າ
ໄດ້ເຂົ້າມາໂຈມຕີແລະທຳລາຍປະເທດຂອງທ່ານ ໂດຍປາດສະຈາກຄວາມຊ່ອຍເຫລືອຈາກ
ພຣະຜູ້ເປັນເຈົ້າ ຊັ້ນບໍ? ແມ່ນ ພຣະຜູ້ເປັນເຈົ້າ ເອງທີ່ໄດ້ຊົງບອກໃຫ້ຂ້າພະເຈົ້າໂຈມຕີ ແລະທຳ-
ລາຍປະເທດຂອງພວກທ່ານ.”

[26]ຕໍ່ມາ ເອລີຢາກີມ ເຊັບນາ ແລະ ໂຢອາ ໄດ້ເວົ້າຕໍ່ນາຍທະຫານຜູ້ນັ້ນວ່າ, “ຢ່າເວົ້າເປັນ
ພາສາ ເຮັບເຣີ ເລີຍ ກະລຸນາເວົ້າເປັນພາສາ ອາຣາມ ເພາະພວກຂ້າພະເຈົ້າເຂົ້າໃຈຢູ່ ແລະເພື່ອ
ບໍ່ໃຫ້ປະຊາຊົນຢູ່ເທິງກຳແພງນັ້ນຮູ້ເລື່ອງນຳ.” [27]ແຕ່ນາຍທະຫານ ເວົ້າຕອບວ່າ, “ພວກທ່ານຄິດ
ວ່າ ເຈົ້າຊີວິດຂອງຂ້າພະເຈົ້າສົ່ງຂ້າພະເຈົ້າມານີ້ ເພື່ອບອກເລື່ອງນີ້ແກ່ເຈົ້າຊີວິດ ຫລືຕົວພວກ
ທ່ານເອງເທົ່ານັ້ນບໍ? ຂ້າພະເຈົ້າຢາກເວົ້າໃຫ້ປະຊາຊົນທີ່ນັ່ງເທິງກຳແພງນັ້ນໄດ້ຍິນນຳ ເພາະວ່າ
ພວກເຂົາຈະກິນຂີ້ ແລະດື່ມນໍ້າຍ່ຽວຂອງຕົນເອງ ດັ່ງດຽວກັນກັບພວກທ່ານ.”

[28]ແລ້ວນາຍທະຫານຜູ້ນັ້ນກໍຢືນຂຶ້ນຮ້ອງສຽງດັງ ເປັນພາສາ ເຮັບເຣີວ່າ, [29]“ຈົ່ງຟັງຄຳບອກ-
ເລົ່າຂອງເຈົ້າຊີວິດ ອັດຊີເຣຍ ອົງຍິ່ງໃຫຍ່ວ່າ ຢ່າໃຫ້ເຈົ້າ ເຮເຊກີຢາ ຕົບຕາພວກທ່ານເລີຍ ເພິ່ນ
ຈະບໍ່ມີອຳນາດໃດໆຊ່ອຍເຫລືອພວກທ່ານໃຫ້ພົ້ນໄດ້ດອກ. [30]ຢ່າຍອມໃຫ້ເຈົ້າ ເຮເຊກີຢາ ຈູງດັງ
ພວກທ່ານ ເຂົ້າໄປເພິ່ງ ພຣະຜູ້ເປັນເຈົ້າ ເລີຍ ຢ່າຄິດວ່າ ພຣະຜູ້ເປັນເຈົ້າ ຈະຊ່ອຍພວກທ່ານໃຫ້
ພົ້ນໄພໄດ້ ແລະຈະບໍ່ໃຫ້ເມືອງນີ້ຕົກຢູ່ໃນອຳນາດຂອງເຈົ້າຊີວິດ ອັດຊີເຣຍ ໄດ້. [31]ຢ່າເຊື່ອຟັງເຈົ້າ
ເຮເຊກີຢາ ເລີຍ ເຈົ້າຊີວິດ ອັດຊີເຣຍ ໄດ້ອອກຄຳສັ່ງໃຫ້ພວກທ່ານອອກມາຍອມຈຳນົນ ແລ້ວ
ພວກທ່ານກໍຈະມີສ່ວນໄດ້ກິນໝາກອະງຸ່ນ ແລະໝາກເດື່ອ ແລະກໍຈະໄດ້ດື່ມນໍ້າໃນສ້າງຂອງຕົນ

ເອງ. [32]ຈົນກວ່າພະອົງຈະໄດ້ນຳພວກທ່ານໄປສູ່ປະເທດທີ່ເປັນເໝືອນປະເທດຂອງພວກທ່ານ
ເອງ ຄື ປະເທດທີ່ມີເຂົ້າບາເລ ແລະນໍ້າອະງຸ່ນຢ່າງດີ ມີເຂົ້າຈີ່ ມີນໍ້າອະງຸ່ນ ມີນໍ້າມັນ ແລະນໍ້າ-
ເຜີ້ງ ເພື່ອວ່າພວກທ່ານຈະມີຊີວິດ ແລະຈະບໍ່ຕາຍ ຂໍຢ່າຟັງຄຳຫລອກລວງຂອງເຈົ້າເຮເຊກີຢາ
ທີ່ບອກວ່າພຣະຜູ້ເປັນເຈົ້າຈະຊົງຊ່ອຍຊີວິດຂອງພວກທ່ານໄວ້. [33]ມີພະໃດໆຂອງຊົນຊາດໃດທີ່
ຈະຊ່ອຍເຫລືອປະເທດໃຫ້ພົ້ນຈາກອຳນາດຂອງເຈົ້າຊີວິດອັດຊີເຣຍໄດ້? [34]ພະຂອງເມືອງຮາ-
ມັດ ເມືອງອາປາດ ເມືອງເສຟາວາຢິມ ເມືອງເຮນາ ແລະເມືອງອີວານັ້ນຢູ່ໃສແລ້ວດຽວນີ້?
ບໍ່ເຫັນວ່າມີອົງໃດຊ່ອຍເຫລືອຊາມາເຣຍໄດ້ແມ່ນບໍ? [35]ຈົ່ງບອກຂ້າພະເຈົ້າແດ່ວ່າ ມີພຣະເຈົ້າ
ຂອງປະເທດໃດໃນຈຳນວນພຣະເຈົ້າເຫລົ່ານີ້ ທີ່ໄດ້ຊ່ອຍເຫລືອປະເທດຂອງຕົນໃຫ້ພົ້ນຈາກກຳ-
ມືຂອງເຈົ້າຊີວິດອັດຊີເຣຍໄດ້ ແລ້ວເຫດໃດພວກເຈົ້າຈຶ່ງຄິດວ່າ ພຣະຜູ້ເປັນເຈົ້າຈຶ່ງຈະສາມາດ
ຊ່ອຍນະຄອນເຢຣູຊາເລັມໃຫ້ພົ້ນໄພໄດ້?” [36]ປະຊາຊົນໄດ້ພາກັນມິດຢູ່ ເພາະວ່າເຈົ້າເຮເຊກີຢາ
ໄດ້ສັ່ງບໍ່ໃຫ້ພວກເຂົາຕອບຫຍັງໝົດ.

[37]ເອລີຢາກິມ ເຊັບນາ ແລະໂຢອາ ຕ່າງກໍຈີກເສື້ອຜ້າຂອງຕົນເອງດ້ວຍຄວາມເສຍໃຈ
ແລະພາກັນເຂົ້າໄປຂາບທູນສິ່ງທີ່ນາຍທະຫານຜູ້ນັ້ນໄດ້ເວົ້າໃຫ້ເຈົ້າເຮເຊກີຢາຊາບ.

# ບົດທີ 19

## ເຈົ້າເຮເຊກີຢາຂໍຄຳປຶກສາຈາກເອຊາຢາ

[1]ເມື່ອເຈົ້າເຮເຊກີຢາໄດ້ຍິນຄຳລາຍງານ ພະອົງກໍຊົງຈີກເຄື່ອງນຸ່ງ ແລະຊົງໃສ່ເຄື່ອງໄວ້ທຸກ
ແລ້ວສະເດັດໄປຍັງພຣະວິຫານຂອງພຣະຜູ້ເປັນເຈົ້າ. [2]ພະອົງໄດ້ສົ່ງ ເອລີຢາກິມ ຜູ້ຮັບຜິດ-
ຊອບວຽກການທົ່ວໄປໃນພະລາຊະວັງ ເຊັບນາ ລາຊະເລຂານຸການ ພ້ອມທັງພວກມະຫາປະ-
ໂລຫິດ ໄປຫາຜູ້ປະກາດພຣະທຳ ເອຊາຢາ ລູກຊາຍຂອງອາໂມດ ທຸກຄົນທີ່ພະອົງສົ່ງໄປນີ້ນຸ່ງ
ເຄື່ອງໄວ້ທຸກ. [3]ພວກນີ້ໄດ້ເວົ້າຕໍ່ເອຊາຢາວ່າ, “ເຈົ້າເຮເຊກີຢາໄດ້ບອກດັ່ງນີ້ ມື້ນີ້ເປັນມື້ທີ່ທຸກທໍ-
ລະມານ ເປັນມື້ແຫ່ງການລົງໂທດ ແລະເປັນມື້ອັບອາຍຂາຍໜ້າ ເອຊາຢາ ພວກຂ້າພະເຈົ້າ
ເປັນເໝືອນຍິງທີ່ກຳລັງຈະອອກລູກ ຊຶ່ງບໍ່ມີແຮງພໍຈະເບັ່ງລູກອອກ. [4]ເຈົ້າຊີວິດອັດຊີເຣຍໄດ້ສົ່ງ
ທະຫານຂອງພະອົງມາ ເພື່ອເວົ້າໝິ່ນປະໝາດພຣະເຈົ້າຜູ້ຊົງພຣະຊົນຢູ່ ຂໍໃຫ້ພຣະຜູ້ເປັນເຈົ້າ
ຂອງທ່ານຊົງຮັບຟັງຄຳນີ້ ແລະລົງໂທດແກ່ຜູ້ທີ່ກ່າວນັ້ນ ຂໍໃຫ້ທ່ານຈົ່ງອ້ອນວອນຕໍ່ພຣະຜູ້ເປັນ-
ເຈົ້າ ເພື່ອໄພ່ພົນຂອງເຮົາຈະໄດ້ມີຊີວິດສືບຕໍ່ໄປ.”

[5-6]ເມື່ອເອຊາຢາ ຮັບຂ່າວຈາກເຈົ້າຊີວິດເຮເຊກີຢາແລ້ວ ເພິ່ນກໍຝາກຄຳຂາບທູນກັບເມືອ
ວ່າ, “ພຣະຜູ້ເປັນເຈົ້າຊົງບໍ່ໃຫ້ພະອົງຫວັ່ນໄຫວຕໍ່ຄຳກ່າວຫາທີ່ວ່າ ພຣະຜູ້ເປັນເຈົ້າບໍ່ສາມາດ
ຊ່ອຍໃຫ້ພວກເຮົາພົ້ນໄພໄດ້. [7]ພຣະຜູ້ເປັນເຈົ້າຈະເຮັດໃຫ້ເຈົ້າຊີວິດອັດຊີເຣຍໄດ້ຍິນຂ່າວເລົ່າລື
ແລ້ວພະອົງກໍຈະກັບຄືນເມືອປະເທດຂອງຕົນເອງ ແລະພຣະຜູ້ເປັນເຈົ້າຈະໃຫ້ພະອົງຖືກຂ້າໃນ
ປະເທດນັ້ນ.”

## ຜູ້ບັນຊາການທະຫານອັດຊີເຣຍສົ່ງຄຳຂູ່ໄປຫາເຈົ້າເຮເຊກີຢາ

[8]ເມື່ອນາຍທະຫານອັດຊີເຣຍຮູ້ວ່າ ເຈົ້າຊີວິດໄດ້ອອກຈາກເມືອງລາກິດ ແລະກຳລັງສູ້ຮົບຢູ່

ທີ່ເມືອງ ລິບນາ ລາວກໍໄດ້ປຶກສາກັບພະອົງຢູ່ທີ່ນັ້ນ. [9-10]ໃນເວລານັ້ນ ເຈົ້າຊີວິດແຫ່ງອັດຊີເຣຍ
ໄດ້ຮູ້ຂ່າວວ່າ ກອງທັບເອຢິບ ໂດຍການນຳຂອງເຈົ້າ ຕີຣາກາ ຊາວເອທີໂອເປຍກຳລັງມຸ່ງໜ້າ
ມາໂຈມຕີພວກຕົນ ດັ່ງນັ້ນ ພະອົງຈຶ່ງສົ່ງຈົດໝາຍໄປຫາເຈົ້າເຮເຊກີຢາ ເຈົ້າຊີວິດແຫ່ງຢູດາ
ດັ່ງນີ້ "ຢ່າໃຫ້ພຣະເຈົ້າຜູ້ທີ່ທ່ານເພິ່ງພາອາໄສນັ້ນຫລອກລວງທ່ານເລີຍວ່າ ນະຄອນເຢຣູຊາ-
ເລັມຈະບໍ່ຕົກຢູ່ໃນອຳນາດຂອງເຮົາ. [11]ດັ່ງນັ້ນ ດຽວນີ້ ທ່ານກໍໄດ້ຍິນແລ້ວວ່າ ບັນດາເຈົ້າຊີວິດ
ອັດຊີເຣຍໄດ້ປະຕິບັດຢ່າງໃດຕໍ່ປະເທດທັງຫລາຍ ທີ່ພະອົງມຸ່ງຫວັງທຳລາຍ ທ່ານຄິດວ່າຈະໜີ
ພົ້ນໄປໄດ້ຊັ້ນບໍ? [12]ພວກບັນດາບັນພະບູລຸດຂອງຂ້າພະເຈົ້າ ໄດ້ທຳລາຍຫົວເມືອງຕ່າງໆ ເຊັ່ນ
ເມືອງໂກຊານ ເມືອງຮາຣານ ເມືອງເຣເຊັບ ແລະໄດ້ຂ້າຊາວເບັດເອເດັນ ທີ່ໄດ້ອາໄສຢູ່ໃນ
ເມືອງ ເຕລັດຊາ ແຕ່ບໍ່ເຫັນມີພະໃດຊ່ອຍຊົນຊາດຕ່າງໆ ນັ້ນໃຫ້ພົ້ນໄດ້. [13]ສ່ວນເຈົ້າຊີວິດ
ເມືອງຮາມັດ ເມືອງອາປາດ ເມືອງເສຟາວາຢິມ ເມືອງເຮນາ ແລະເມືອງອີວາ ໄປໃສ
ໝົດ?"

[14]ເຈົ້າເຮເຊກີຢາ ຊົງຮັບເອົາລາຊະສານຈາກມືຂອງຜູ້ຖືສານມາອ່ານ ພະອົງໄດ້ຂຶ້ນໄປພຣະ-
ວິຫານຂອງພຣະຜູ້ເປັນເຈົ້າ ແລ້ວແຜ່ແບລາຊະສານນັ້ນຕໍ່ພຣະພັກຂອງພຣະຜູ້ເປັນເຈົ້າ.
[15]ເຈົ້າເຮເຊກີຢາອ້ອນວອນພຣະຜູ້ເປັນເຈົ້າດັ່ງນີ້ວ່າ, "ຂ້າແດ່ພຣະຜູ້ເປັນເຈົ້າ ພຣະເຈົ້າອິ-
ສຣາເອນ ຜູ້ຊົງປະທັບຢູ່ພະທີ່ນັ່ງໃນພຣະວິຫານອັນສັກສິດນີ້ ພຣະອົງເທົ່ານັ້ນທີ່ຊົງເປັນພຣະ-
ເຈົ້າຂອງລາຊະອານາຈັກທັງປວງໃນໂລກນີ້. [16]ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງທອດພຣະເນດ
ເບິ່ງເຫດການທີ່ເກີດຂຶ້ນກັບພວກຂ້ານ້ອຍໃນເວລານີ້ ຂໍຊົງຟັງຖ້ອຍຄຳຂອງເສັນນາເກຣິບທີ່ເວົ້າ
ໝິ່ນປະໝາດພຣະອົງ ຜູ້ເປັນພຣະເຈົ້າອົງຊົງພຣະຊົນຢູ່. [17]ພວກຂ້ານ້ອຍຮູ້ດີວ່າ ພວກເຈົ້າຊີ-
ວິດອັດຊີເຣຍໄດ້ທຳລາຍລ້າງຊົນຊາດຕ່າງໆ ໃຫ້ໝົດສິ້ນໄປ ໄດ້ເຮັດໃຫ້ຜືນແຜ່ນດິນຮ້າງເປົ່າ.
[18]ແລະໂຍນພະຂອງພວກເຂົາເຂົ້າໃນກອງໄຟ ພະເຫລົ່ານັ້ນບໍ່ແມ່ນພະແທ້ ແຕ່ມະນຸດໄດ້ສ້າງ
ຂຶ້ນມາດ້ວຍໄມ້ ແລະຫີນ. [19]ແຕ່ດຽວນີ້ ຂໍພຣະຜູ້ເປັນເຈົ້າຊົງຊ່ອຍພວກຂ້ານ້ອຍໃຫ້ພົ້ນຈາກ
ພວກອັດຊີເຣຍ ເພື່ອວ່າທຸກຊົນຊາດໃນໂລກນີ້ຈະຮູ້ຈັກວ່າ ພຣະອົງເທົ່ານັ້ນທີ່ເປັນພຣະເຈົ້າອົງ
ຍິ່ງໃຫຍ່.

## ພຣະເຈົ້າຊົງຕອບຄຳອ້ອນວອນຂອງເຮເຊກີຢາ

[20]ແລ້ວເອຊາຢາ ລູກຊາຍຂອງອາໂມດກໍສົ່ງຄວາມໄປທູນເຈົ້າ ເຮເຊກີຢາວ່າ ພຣະຜູ້ເປັນ-
ເຈົ້າແຫ່ງອິສຣາເອນ ຊົງໄດ້ຍິນຄຳອ້ອນວອນຂອງພະອົງ ແລະໄດ້ຊົງຕອບແລ້ວ. [21]ພຣະຜູ້-
ເປັນເຈົ້າຊົງກ່າວວ່າ,

"ເສັນນາເກຣິບເອີຍ ເມືອງເຢຣູຊາເລັມຈະຫົວຂວັນ
ແລະໝິ່ນປະໝາດເຈົ້າ.
[22] ເຈົ້າຮູ້ບໍວ່າ ເຈົ້າໄດ້ປະໝາດ
ແລະເວົ້າເຍາະເຍີ້ຍໃຜ?
ແມ່ນເຮົາຄືພຣະເຈົ້າອົງບໍລິສຸດຂອງອິສຣາເອນ
ທີ່ເຈົ້າໄດ້ປະໝາດນັ້ນ.

[23] ເຈົ້າໄດ້ສົ່ງຜູ້ສົ່ງຂ່າວຂອງເຈົ້າໄປເວົ້າອວດໂອຫັງໃສ່ເຮົາວ່າ
ເຈົ້າໄດ້ນຳເອົາກອງລົດຮົບຂຶ້ນໄປ
ຍຶດຄອງເອົາຫົວພູສູງຫລາຍໜ່ວຍຕະຫລອດຮອດຈອມພູເລບານອນ
ເຈົ້າໄດ້ຄຸຍອວດອ້າງວ່າ ຢູ່ທີ່ນັ້ນເຈົ້າໄດ້ຕັດຕົ້ນສົນຕົ້ນທີ່ສູງ
ແລະຕົ້ນແປກຕົ້ນທີ່ສວຍງາມທີ່ສຸດລົງ
ເຈົ້າໄດ້ເຂົ້າໄປເຖິງປ່າບ່ອນໄກແສນໄກ.
[24] ເຈົ້າອວດອ້າງວ່າ ເຈົ້າໄດ້ຂຸດນໍ້າສ້າງ
ໄດ້ດື່ມນໍ້າຢູ່ຕ່າງແດນ
ແລະໄດ້ໃຫ້ທະຫານຂອງເຈົ້າ
ຢຽບແມ່ນໍ້າໃນ ເອຢິບ ຈົນບົກ.
[25] ເຈົ້າບໍ່ເຄີຍໄດ້ຍິນບໍວ່າ
ເຮົາໄດ້ຕຽມແຜນການໄວ້ແຕ່ດົນແລ້ວ
ແລະດຽວນີ້ ເຮົາໄດ້ປະຕິບັດຕາມແຜນການນັ້ນ
ຄື ເຮົາໃຫ້ເຈົ້າມີອຳນາດ
ເພື່ອທຳລາຍກຳແພງອັນແໜ້ນໜາໃຫ້ຫັກເພພັງລົງ.
[26] ຊາວເມືອງນັ້ນບໍ່ມີກຳແພງຕໍ່ສູ້ ມີແຕ່ຢ້ານກົວຕົວສັ່ນ
ພວກເຂົາປຽບເໝືອນຫຍ້າທີ່ຢູ່ໃນທົ່ງນາ
ຫລືຫຍ້າອ່ອນທີ່ປົ່ງຂຶ້ນຢູ່ເທິງຫລັງຄາເຮືອນ
ທີ່ຖືກກະແສລົມຮ້ອນຈາກທິດຕາເວັນອອກພັດປິວໄປ.
[27] ແຕ່ເຮົາຮູ້ທຸກຢ່າງກ່ຽວກັບເຈົ້າ ບໍ່ວ່າເຈົ້າເຮັດຫຍັງ
ຫລືໄປໃສ ເຮົາຮູ້ວ່າເຈົ້າກຽດຊັງເຮົາຫລາຍ.
[28] ເຮົາໄດ້ຝັນວ່າ ເຈົ້າກຽດຊັງ ແລະອວດຈອງຫອງ
ດັ່ງນັ້ນ ເຮົາຈະເອົາຂໍເກາະດັງເຈົ້າ ແລະເອົາແຍ່ງໃສ່ປາກເຈົ້າ
ແລະຈະໃຫ້ເຈົ້າກັບຄືນເມືອທາງເສັ້ນເກົ່າ.”

[29]ແລ້ວ ເອຊາຢາ ກໍເວົ້າຕໍ່ເຈົ້າ ເຮເຊກີຢາ ວ່າ,
“ເຫດການສຳຄັນທີ່ຈະເກີດຂຶ້ນມີດັ່ງນີ້ ຄື ໃນປີນີ້ ແລະປີໜ້າ
ພະອົງແລະປະຊາຊົນຈະໄດ້ກິນແຕ່ພືດຜົນທີ່ເກີດຂຶ້ນຕາມປ່າໄມ້ເທົ່ານັ້ນ
ແຕ່ໃນປີຕໍ່ໄປ ຈະໄດ້ຫວ່ານພືດແລະເກັບກ່ຽວ
ຈະໄດ້ປູກສວນອະງຸ່ນ ແລະໄດ້ກິນໝາກຂອງມັນ
[30] ຊາວ ຢູດາ ທີ່ຍັງເຫລືອຢູ່ນັ້ນ
ຈະເປັນເໝືອນຕົ້ນໄມ້ທີ່ຢັ່ງຮາກເລິກລົງພື້ນດິນ ແລະຈະເກີດດອກອອກຜົນ.
[31] ທີ່ນະຄອນ ເຢຣູຊາເລັມ ແລະເທິງພູຊີໂອນ ຈະມີຄົນເຫລືອຢູ່
ຍ້ອນຄວາມຮັກອັນເກັ່ງກ້າພຣະຜູ້ເປັນເຈົ້າ ຈຶ່ງຊົງໃຫ້ເປັນດັ່ງນີ້.

[32]ພຣະຜູ້ເປັນເຈົ້າຊົງກ່າວກ່ຽວກັບເຈົ້າຊີວິດອັດຊີເຣຍວ່າ,
“ລາວຈະເຂົ້າໄປໃນເມືອງນີ້ ຫລືຈະຍິງລູກໜ້າທະນູໃສ່ກໍບໍ່ໄດ້
ທະຫານທີ່ມີແຜ່ນເຫລັກຕ້ານທານຈະເຂົ້າໃກ້ເມືອງນີ້ບໍ່ໄດ້
ແລະຈະກອງດິນປີນຂຶ້ນເມືອງນີ້ກໍບໍ່ໄດ້
ລາວຈະກັບຄືນເມືອຕາມທາງເກົ່າທີ່ລາວມາ.
[33] ແລະລາວຈະບໍ່ໄດ້ເຂົ້າໄປໃນເມືອງນີ້
ເພື່ອກຽດ ແລະສັກສີຂອງເຮົາ.
[34] ແລະເພື່ອເຫັນແກ່ດາວິດຜູ້ຮັບໃຊ້ຂອງເຮົາ
ເຮົາຈະປ້ອງກັນ ແລະປົກປັກຮັກສາໄວ້”
ພຣະຜູ້ເປັນເຈົ້າຊົງໄດ້ກ່າວໄວ້ດັ່ງນີ້.

[35]ໃນຄືນດຽວກັນນັ້ນ ທູດຂອງພຣະຜູ້ເປັນເຈົ້າໄດ້ລົງມາປະຫານຊີວິດພວກທະຫານ ຮ້ອຍ
ແປດສິບຫ້າພັນຄົນທີ່ຄ້າຍທະຫານອັດຊີເຣຍ ຕື່ນເຊົ້າມື້ໃໝ່ມາໄດ້ມີຊາກສົບນອນເດຍລະດາດ.
[36]ແລ້ວເສັນນາເກຣິບເຈົ້າຊີວິດອັດຊີເຣຍໄດ້ຖອຍທັບກັບຄືນສູ່ນະຄອນນີເນເວ. [37]ມື້ໜຶ່ງ ເມື່ອ
ພະອົງກຳລັງຂາບໄຫວ້ທີ່ວິຫານ ພະນິດສະໂຣກ ພະຂອງພະອົງ ອັດຣຳເມເລັກ ແລະຊາ-
ເຣັດເຊ ໂອລົດຂອງພະອົງໄດ້ໃຊ້ດາບປົງພະຊົນພະອົງເສຍ ແລ້ວປົບໜີໄປປະເທດອາຣາຣັດ ຕໍ່
ມາ ໂອລົດອີກອົງໜຶ່ງຂອງພະອົງທີ່ຊົງພະນາມວ່າ ເອຊາຮັດໂດນ ກໍຂຶ້ນຄອງລາຊະສົມບັດ
ແທນ.

# ບົດທີ 20

## ເຮເຊກີຢາປ່ວຍ ແລະໄດ້ຫາຍເປັນປົກກະຕິ[ກ]

[1]ເທື່ອນັ້ນ ເຮເຊກີຢາປ່ວຍໃກ້ຈະຕາຍ ແລະຜູ້ທຳນວາຍເອຊາຢາລູກຊາຍອາໂມດເຂົ້າມາ
ເຝົ້າພະອົງແລະທູນພະອົງວ່າ “ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ‘ຈົ່ງສັ່ງຄອບຄົວ ແລະການເມືອງ
ຂອງເຈົ້າໃຫ້ຮຽບຮ້ອຍ ເຈົ້າຈະຕ້ອງຕາຍ ເຈົ້າຈະບໍ່ຟື້ນຄືນ’” [2]ແລ້ວເຮເຊກີຢາໄດ້ຫັນໜ້າເຂົ້າ
ຂ້າງຝາ ແລະອະທິຖານຕໍ່ພຣະຜູ້ເປັນເຈົ້າວ່າ [3]“ຂ້າແດ່ພຣະຜູ້ເປັນເຈົ້າຂໍໄດ້ລະນຶກເຖິງວ່າຂ້າ-
ພະອົງດຳເນີນຢູ່ຕໍ່ເບື້ອງພຣະພັກພຣະອົງດ້ວຍຄວາມຈິງ ແລະດ້ວຍສິ້ນສຸດໃຈ ແລະໄດ້ເຮັດສິ່ງ
ທີ່ດີໃນສາຍພຣະເນດຂອງພຣະອົງ” ເຮເຊກີຢາຮ້ອງໄຫ້ຫລາຍ.

[4]ຢູ່ມາກ່ອນທີ່ເອຊາຢາຈະອອກໄປຮອດເດີ່ນ ພຣະທຳຂອງພຣະຜູ້ເປັນເຈົ້າມາກໍເຖິງເພິ່ນວ່າ
[5]“ຈົ່ງກັບໄປບອກເຮເຊກີຢາເຈົ້ານາຍຂອງປະຊາຊົນຂອງເຮົາວ່າ ພຣະຜູ້ເປັນເຈົ້າພຣະເຈົ້າ
ຂອງດາວິດບັນພະບູລຸດຂອງເຈົ້າ ກ່າວດັ່ງນີ້ວ່າ ‘ເຮົາໄດ້ຍິນຄຳອະທິຖານຂອງເຈົ້າແລ້ວ ເຮົາ
ໄດ້ເຫັນນ້ຳຕາຂອງເຈົ້າແລ້ວ ເບິ່ງແມ ເຮົາຈະຮັກສາເຈົ້າໃນມື້ທີສາມ ເຈົ້າຈະຂຶ້ນໄປພຣະວິຫານ
ຂອງພຣະຜູ້ເປັນເຈົ້າ [6]ແລະເຮົາຈະເພີ່ມຊີວິດຂອງເຈົ້າອີກສິບຫ້າປີ ເຮົາຈະຊ່ວຍເຈົ້າພ້ອມທັງ
ເມືອງນີ້ໃຫ້ພົ້ນຈາກເງື້ອມມືຂອງ ກະສັດແຫ່ງອັດຊີເຣຍ ແລະປ້ອງກັນເມືອງນີ້ໄວ້ ເພື່ອເຫັນແກ່

[ກ]2ຂຄວ 32:24 [ຂ]2ຂຄວ 32:27–31

ເຮົາເອງ ແລະເພື່ອເຫັນແກ່ດາວິດຜູ້ຮັບໃຊ້ຂອງເຮົາ'" 7ແລະເອຊາຢາບອກວ່າ "ເອົາເຂົ້າຈີ່
ໝາກເດື່ອເທດມາອັນໜຶ່ງ" ພວກເຂົາກໍເອົາມາວາງໄວ້ເທິງຕີນນັ້ນ ແລ້ວພະອົງຈຶ່ງໄດ້ຫາຍດີ
ເປັນປົກກະຕິ.

8ແລະເຮເຊກີຢາກ່າວກັບເອຊາຢາວ່າ "ແມ່ນຫຍັງຈະເປັນໝາຍສຳຄັນວ່າພຣະເຈົ້າຈະຮັກ-
ສາຂ້າພະເຈົ້າ ແລະວ່າຂ້າພະເຈົ້າ ຈະໄດ້ຂຶ້ນໄປໃນພຣະວິຫານຂອງພຣະຜູ້ເປັນເຈົ້າໃນມື້ທີ
ສາມ" 9ແລະເອຊາຢາທູນວ່າ "ຕໍ່ໄປນີ້ເປັນໝາຍສຳຄັນສຳລັບພະອົງຈາກພຣະເຈົ້າ ຊຶ່ງພຣະ-
ເຈົ້າຈະກະທຳຕາມທີ່ພຣະອົງໄດ້ກ່າວໄວ້ ຄືວ່າ ຈະໃຫ້ເງົາຍ້າຍຂຶ້ນໄປສິບອົງສາ ຫລືຍ້າຍກັບ
ມາສິບອົງສາ" 10ເຮເຊກີຢາກ່າວຕອບວ່າ "ເປັນການງ່າຍທີ່ເງົາຈະຍາວອອກໄປອີກສິບອົງສາ
ແຕ່ໃຫ້ເງົາຍ້າຍກັບ (ຫົດສັ້ນເຂົ້າມາ) ສິບອົງສາຕ່າງຫາກ" 11ແລະຜູ້ທຳນວາຍເອຊາຢາກໍຮ້ອງ
ທູນຕໍ່ພຣະຜູ້ເປັນເຈົ້າ ແລະພຣະອົງຊົງນຳເງົາຍ້າຍກັບມາສິບອົງສາ ຊຶ່ງເງົານັ້ນໄດ້ເລີຍໄປໃນ
ໂມງແດດຂອງອາຮາດ.

## ເຮເຊກີຢາສະແດງຄັງຊັບທັງໝົດຂອງພະອົງໃຫ້ຄົນຈາກບາບີໂລນເຫັນ[ຂ]

12ໃນຄາວນັ້ນ ເມໂຣດັກ-ບາລາດານລູກຊາຍຂອງບາລາດານກະສັດຂອງບາບີໂລນ ໄດ້
ສົ່ງໜັງສື ແລະເຄື່ອງບັນນາການມາໃຫ້ເຮເຊກີຢາ ເພາະພະອົງໄດ້ຍິນວ່າ ເຮເຊກີຢາປ່ວຍຢູ່
13ແລະເຮເຊກີຢາໄດ້ຕ້ອນຮັບລາວ ແລະໄດ້ພາລາວເຂົ້າຊົມຄັງຊັບທັງໝົດຂອງພະອົງ ໂດຍໄດ້
ຊົມເບິ່ງເງິນ, ຄຳແລະເຄື່ອງຫອມ, ນ້ຳມັນປະເສີດ ແລະຄັງອາວຸດຂອງພະອົງທຸກຢ່າງ ຊຶ່ງມີຢູ່
ຄັງທັງຫລາຍຂອງພະອົງໂດຍບໍ່ມີສິ່ງໃດຢູ່ໃນລາຊະວັງ ຫລືໃນລາຊະອານາຈັກທັງໝົດຊຶ່ງເຮ-
ເຊກີຢາບໍ່ໄດ້ສະແດງແກ່ລາວ 14ແລ້ວຜູ້ທຳນວາຍເອຊາຢາກໍເຂົ້າເຝົ້າກະສັດເຮເຊກີຢາ ແລະ
ທູນພະອົງວ່າ "ຄົນເຫລົ່ານີ້ມາທູນຫຍັງກັບພະອົງ ແລະພວກເຂົາມາເຝົ້າພະອົງນັ້ນພວກເຂົາມາ
ແຕ່ໃສ?" ແລະເຮເຊກີຢາກ່າວວ່າ "ພວກເຂົາມາຈາກເມືອງໄກ ມາຈາກບາບີໂລນ" 15ເອຊາ-
ຢາທູນວ່າ "ລາວເຫັນຫຍັງໃນລາຊະວັງຂອງພະອົງແດ່" ແລະເຮເຊກີຢາ ກ່າວຕອບວ່າ "ລາວ
ເຫັນທຸກຢ່າງໃນວັງຂອງເຮົາ, ບໍ່ມີສິ່ງໃດໃນຄັງຂອງເຮົາຊຶ່ງເຮົາບໍ່ໄດ້ສະແດງແກ່ລາວ" 16ແລ້ວ
ເອຊາຢາທູນເຮເຊກີຢາວ່າ "ຂໍໄດ້ຟັງພຣະທຳຂອງພຣະຜູ້ເປັນເຈົ້າ 17ເບິ່ງແມ ວັນເວລາກຳລັງ
ຍ່າງເຂົ້າມາເມື່ອສັບພະສິ່ງທັງໝົດໃນວັງຂອງເຈົ້າ ແລະສິ່ງທີ່ບັນພະບູລຸດຂອງເຈົ້າໄດ້ທ້ອນໂຮມ
ໄວ້ຈົນເຖິງທຸກມື້ນີ້ ຈະຕ້ອງຖືກເອົາໄປບາບີໂລນ ບໍ່ມີສິ່ງໃດເຫລືອຢູ່ເລີຍ ພຣະຜູ້ເປັນເຈົ້າກ່າວ
ດັ່ງນີ້ແຫລະ 18ແລະພວກເຂົາຈະເອົາລູກຊາຍຂອງເຈົ້າ ຜູ້ຊຶ່ງຈະເກີດແກ່ເຈົ້ານັ້ນໄປ ແລະພວກ
ເຂົາຈະໄປເປັນຊາຍຕອນໃນລາຊະວັງຂອງກະສັດຂອງບາບີໂລນ" 19ແລ້ວເຮເຊກີຢາກ່າວກັບ
ເອຊາຢາວ່າ "ພຣະທຳຂອງພຣະຜູ້ເປັນເຈົ້າທີ່ທ່ານກ່າວນັ້ນກໍດີຢູ່" ເພາະພະອົງກ່າວວ່າ "ກໍດີ
ແລ້ວບໍ່ແມ່ນຫລື ໃນເມື່ອມີຄວາມຢູ່ເຢັນເປັນສຸກແລະຄວາມຈິງໃນວັນເວລາຂອງເຮົາ."

## ເຮເຊກີຢາຕາຍ[ກ]

20ລາຊະກິດຕ່າງໆຂອງເຮເຊກີຢາ ແລະອຳນາດທັງໝົດຂອງພະອົງທີ່ພະອົງໄດ້ສ້າງສະນ້ຳ
ແລະຮ່ອງລະບາຍນ້ຳສົ່ງນ້ຳເຂົ້າມາໃນເມືອງຢ່າງໃດນັ້ນກໍໄດ້ບັນທຶກໄວ້ໃນໜັງສືຂ່າວຄາວຂອງ

[ກ]2ຂຄວ 32:32–33 [ຂ]2ຂຄວ 33:19

ກະສັດປະເທດຢູດາ [21]ແລະ ເຮເຊກີຢາ ໄດ້ລ່ວງລັບໄປຢູ່ກັບບັນພະບູລຸດຂອງພະອົງ ແລະ ມາ-
ນາເຊ ລູກຊາຍຂອງພະອົງໄດ້ຂຶ້ນປົກຄອງແທນ.

# ບົດທີ 21

## ມານາເຊໄດ້ປົກຄອງເໜືອຢູດາ[ຂ]

[1]ມານາເຊ ມີອາຍຸສິບສອງປີເມື່ອພະອົງເລີ່ມຂຶ້ນປົກຄອງ ແລະໄດ້ປົກຄອງໃນເມືອງ ເຢຣູຊາ-
ເລັມ ຫ້າສິບຫ້າປີ ແມ່ຂອງພະອົງມີຊື່ວ່ານາງ ເຮັບຊີບາ [2]ພະອົງໄດ້ເຮັດສິ່ງທີ່ຊົ່ວຮ້າຍໃນສາຍ
ພຣະເນດຂອງ ພຣະຜູ້ເປັນເຈົ້າ ຕາມການເຮັດທີ່ໜ້າກຽດຊັງຂອງປະຊາຊາດ ຊຶ່ງ ພຣະຜູ້ເປັນ-
ເຈົ້າ ໄດ້ຂັບໄລ່ໃຫ້ອອກໜີໄປຈາກປະຊາຊົນ ອິສຣາເອນ [3]ເພາະພະອົງໄດ້ສ້າງປູຊະນີຍະສະ-
ຖານສູງ ຊຶ່ງ ເຮເຊກີຢາ ພໍ່ຂອງພະອົງໄດ້ທຳລາຍນັ້ນຂຶ້ນໃໝ່ ແລະພະອົງໄດ້ສ້າງແທ່ນບູຊາສຳ-
ລັບ ພະບາອານ ແລະໄດ້ສ້າງເສົາຮູບເຄົາລົບ ເໝືອນດັ່ງທີ່ ອາຮາບ ກະສັດຂອງ ອິສຣາເອນ ໄດ້
ກະທຳ ແລະໄດ້ກາບໄຫວ້ບໍລິວານທັງໝົດຂອງຟ້າສະຫວັນ ແລະບົວລະບັດພະເຫລົ່ານັ້ນ [4]ພະ
ອົງ ໄດ້ສ້າງ ແທ່ນບູຊາ ໃນ ພຣະວິຫານ ຂອງ ພຣະຜູ້ເປັນເຈົ້າ ຊຶ່ງ ພຣະຜູ້ເປັນເຈົ້າ ໄດ້ກ່າວວ່າ
"ເຮົາຈະບັນຈຸນາມຂອງເຮົາ ໄວ້ໃນ ເຢຣູຊາເລັມ" [5]ພະອົງໄດ້ສ້າງ ແທ່ນບູຊາສຳລັບບັນດາບໍລິ-
ວານຂອງຟ້າສະຫວັນໃນເດີ່ນທັງສອງຂອງພຣະວິຫານຂອງ ພຣະຜູ້ເປັນເຈົ້າ [6]ພະອົງໄດ້ເຜົາລູກ
ຊາຍຂອງຕົນ ເປັນ ເຄື່ອງບູຊາ, ແລະໄດ້ ຖືເລີກຖືຍາມ ແລະເຮັດວິຊາເວດມົນຄາຖາເຂົ້າຊົງ
ແລະໄດ້ຕັ້ງພວກໝໍເຢົາໝໍທຳນວາຍ ໄດ້ເຮັດຊົ່ວຮ້າຍເປັນຈຳນວນຫລາຍໃນສາຍພຣະເນດຂອງ
ພຣະຜູ້ເປັນເຈົ້າ ອັນເຮັດໃຫ້ພຣະອົງຊົງພຣະພິໂລດ [7]ສ່ວນຮູບ ເຄົາລົບສະຫລັກຈາກ ເສົາຮູບ
ເຄົາລົບທີ່ພະອົງໄດ້ສ້າງຂຶ້ນນັ້ນ ພະອົງໄດ້ຕັ້ງໄວ້ໃນພຣະວິຫານຄືພຣະວິຫານທີ່ ພຣະຜູ້ເປັນເຈົ້າ
ກ່າວກັບ ດາວິດ ແລະ ໂຊໂລໂມນ ລູກຊາຍຂອງພະອົງວ່າ "ໃນວິຫານນີ້ ແລະໃນ ເຢຣູຊາເລັມ
ຊຶ່ງເຮົາໄດ້ເລືອກອອກຈາກຕະກູນທັງໝົດຂອງ ອິສຣາເອນ ເຮົາຈະບັນຈຸນາມຂອງເຮົາໄວ້ເປັນນິດ
[8]ເຮົາຈະບໍ່ ເປັນ ເຫດ ໃຫ້ຕີນ ຂອງ ອິສຣາເອນ ພະເນຈອນອອກໄປ ຈາກ ແຜ່ນດິນທີ່ ເຮົາໄດ້ໃຫ້ກັບ
ບັນພະບູລຸດຂອງພວກເຂົາອີກ ພຽງ ແຕ່ພວກເຂົາລະມັດລະວັງທີ່ຈະເຮັດຕາມໃນທຸກຢ່າງທີ່ເຮົາ
ໄດ້ສັ່ງແກ່ພວກເຂົາ ແລະຕາມພະບັນຍັດທັງໝົດທີ່ ໂມເຊ ຜູ້ຮັບໃຊ້ຂອງເຮົາສັ່ງແກ່ພວກເຂົາ"
[9]ແຕ່ພວກເຂົາບໍ່ໄດ້ຟັງ ແລະ ມານາເຊ ໄດ້ຊັກຈູງພວກເຂົາໃຫ້ເຮັດຊົ່ວຫລາຍກວ່າບັນດາປະຊາ-
ຊາດ ຊຶ່ງ ພຣະຜູ້ເປັນເຈົ້າ ໄດ້ທຳລາຍຕໍ່ໜ້າປະຊາຊົນ ອິສຣາເອນ ທີ່ໄດ້ເຄີຍເຮັດຜ່ານມາແລ້ວ
ນັ້ນ.

## ພຣະເຈົ້າໄດ້ເຕືອນເລື່ອງຄວາມຊົ່ວຮ້າຍຂອງມານາເຊ

[10]ແລະ ພຣະຜູ້ເປັນເຈົ້າ ໄດ້ກ່າວ ໂດຍພວກຜູ້ທຳນວາຍ ຜູ້ຮັບໃຊ້ຂອງພຣະອົງວ່າ [11]"ເພາະ
ມານາເຊ ກະສັດຂອງ ຢູດາ ໄດ້ເຮັດສິ່ງທີ່ໜ້າກຽດຊັງ ເຫລົ່ານີ້ ແລະ ໄດ້ເຮັດສິ່ງຊົ່ວຮ້າຍຫລາຍ
ກວ່າຄົນ ອະໂມຣິດ ທີ່ໄດ້ເຮັດທັງໝົດ ຜູ້ຊຶ່ງຢູ່ກ່ອນລາວ ແລະໄດ້ເຮັດໃຫ້ຢູດາ ເຮັດບາບຫລາຍ
ດ້ວຍຮູບເຄົາລົບຂອງລາວ [12]ເພາະສະນັ້ນ ພຣະຜູ້ເປັນເຈົ້າ ພຣະເຈົ້າຂອງ ອິສຣາເອນ ກ່າວ
ດັ່ງນີ້ວ່າ 'ເບິ່ງແມ ເຮົາກຳລັງນຳເຫດຮ້າຍມາເຖິງ ເຢຣູຊາເລັມ ແລະ ຢູດາ ຄືທີ່ທຸກຄົນໄດ້ຍິນ

ແລ້ວຫູທັງສອງຂອງພວກເຂົາກໍໜວກໄປ [13]ແລະເຮົາຈະເອົາເຊືອກມາວັດແທກເມືອງຊາມາເຣຍ
ເໜືອກຸງ ເຢຣູຊາເລັມ ແລະໃຊ້ລູກດິ່ງຄືເຄື່ອງວັດເຊື້ອສາຍ ອາຮາບ ແລະເຮົາຈະລ້າງ ເຢຣູຊາ-
ເລັມ ເໝືອນກັບລ້າງຖ້ວຍ ຄືລ້າງມັນແລ້ວຂວ້ຳລົງ [14]ເຮົາຈະແກວ່ງນໍລະດົກສ່ວນທີ່ເຫລືອຂອງ
ເຮົາ ແລະມອບພວກເຂົາໄວ້ໃນກຳມືສັດຕູຂອງພວກເຂົາແລະພວກເຂົາຈະເປັນເຫຍື່ອ ແລະເປັນ
ເຄື່ອງປຸ້ນ ແກ່ສັດຕູທັງໝົດຂອງພວກເຂົາ [15]ເພາະພວກເຂົາໄດ້ເຮັດສິ່ງທີ່ຊົ່ວຮ້າຍໃນສາຍຕາ
ຂອງເຮົາ ແລະໄດ້ເຮັດໃຫ້ເຮົາຮ້າຍຕັ້ງແຕ່ມື້ທີ່ບັນພະບູລຸດ ຂອງພວກເຂົາອອກມາຈາກ ເອຢິບ
ຈົນເຖິງທຸກມື້ນີ້.'"

## ມານາເຊ ຜູ້ເຮັດໃຫ້ຄົນເລືອດຕົກ[ກ]

[16]ຫລາຍ ກວ່າ ນັ້ນ ອີກ ມານາເຊ ໄດ້ ເຮັດ ໃຫ້ ເລືອດ ທີ່ ບໍ່ ມີຄວາມ ຜິດ ໄຫລ ອອກ ເປັນ ຈຳນວນ
ຫລາຍຈົນເຕັມ ເຢຣູຊາເລັມ ຈາກຟາກໜຶ່ງໄປຮອດອີກຟາກໜຶ່ງ, ນອກຈາກບາບທີ່ພະອົງໄດ້ເຮັດ
ແລ້ວ ເພິ່ນຍັງໄດ້ພາຢູດາ ເຮັດບາບດ້ວຍໂດຍປະພຶດສິ່ງທີ່ຊົ່ວຮ້າຍໃນສາຍພຣະເນດຂອງ ພຣະ-
ຜູ້ເປັນເຈົ້າ.

[17]ລາຊະກິດຕ່າງໆຂອງ ມານາເຊ ແລະບັນດາສິ່ງຊຶ່ງພະອົງໄດ້ເຮັດ ແລະບາບທີ່ພະອົງໄດ້
ເຮັດກໍໄດ້ບັນທຶກໄວ້ໃນໜັງສືຂ່າວຄາວຂອງກະສັດ ຢູດາ [18]ແລະ ມານາເຊ ໄດ້ລ່ວງລັບໄປຢູ່ກັບ
ບັນພະບູລຸດຂອງພະອົງ ພວກເຂົາຝັງສົບໄວ້ໃນສວນແຄມລາຊະວັງຂອງພະອົງໃນສວນຂອງ
ອຸດຊາ ແລະ ອາໂມນ ລູກຊາຍຂອງພະອົງກໍຂຶ້ນປົກຄອງແທນ.

## ອາໂມນໄດ້ປົກຄອງເໜືອຢູດາ[ຂ]

[19]ອາໂມນ ມີອາຍຸຊາວສອງປີເມື່ອພະອົງເລີ່ມປົກຄອງ ແລະໄດ້ປົກຄອງໃນເມືອງ ເຢຣູຊາເລັມ
ສອງປີ ແມ່ຂອງພະອົງມີຊື່ວ່ານາງ ເມຊຸນເລເມັດ ລູກສາວຂອງ ຮາຣຸດ ຊາວ ໂຢດບາ [20]ພະອົງໄດ້
ເຮັດສິ່ງທີ່ຊົ່ວຮ້າຍໃນສາຍພຣະເນດຂອງ ພຣະຜູ້ເປັນເຈົ້າ ເໝືອນກັບ ມານາເຊ ພໍ່ຂອງພະອົງໄດ້
ເຮັດມາ [21]ພະອົງໄດ້ດຳເນີນໃນທາງທັງໝົດທີ່ພໍ່ຂອງຕົນໄດ້ດຳເນີນ ແລະບົວລະບັດຮູບເຄົາລົບ
ຊຶ່ງພໍ່ຂອງພະອົງໄດ້ບົວລະບັດນັ້ນ ແລະນະມັດສະການຮູບເຄົາລົບເຫລົ່ານັ້ນ [22]ພະອົງໄດ້ປະຖິ້ມ
ພຣະຜູ້ເປັນເຈົ້າ ພຣະເຈົ້າ ແຫ່ງບັນພະບູລຸດຂອງພະອົງ ແລະບໍ່ໄດ້ດຳເນີນໃນ ເສັ້ນທາງຂອງ
ພຣະຜູ້ເປັນເຈົ້າ.

## ອາໂມນຕາຍ ໂຢສີຢາຂຶ້ນປົກຄອງແທນ[ຂ]

[23]ແລະຂ້າລາຊະການຂອງ ອາໂມນ ໄດ້ຮ່ວມກັນຄິດກະບົດຕໍ່ກະສັດ ອາໂມນ ແລະປະຫານ
ກະສັດໃນລາຊະວັງຂອງພະອົງ [24]ແຕ່ປະຊາຊົນໄດ້ປະຫານທຸກຄົນທີ່ຮ່ວມກັນຄິດກະບົດຕໍ່ກະ-
ສັດ ອາໂມນ ແລະປະຊາຊົນໄດ້ ຕັ້ງ ໂຢສີຢາ ລູກຊາຍຂອງພະອົງ ໃຫ້ເປັນກະສັດແທນ.

[25]ລາຊະກິດຕ່າງໆຂອງ ອາໂມນ ທີ່ພະອົງໄດ້ເຮັດກໍໄດ້ບັນທຶກໄວ້ໃນໜັງສືຂ່າວຄາວຂອງກະ-
ສັດ ຢູດາ [26]ພວກເຂົາໄດ້ຝັງສົບໄວ້ໃນອຸບໂມງຂອງພະອົງໃນສວນຂອງ ອຸດຊາ ແລະ ໂຢສີຢາ
ລູກຊາຍຂອງພະອົງຂຶ້ນປົກຄອງແທນ.

---

[ກ]2ຂຄວ 33:18–20

[ຂ]2ຂຄວ 33:20–23 [ຂ]2ຂຄວ 33:24–25

# ບົດທີ 22

## ຊີວະປະຫວັດຫຍໍ້ຂອງເຈົ້າໂຢສີຢາ

1ໂຢສີຢາ ຂຶ້ນເປັນກະສັດຢູດາ ເມື່ອພະອົງມີອາຍຸໄດ້ແປດປີ ພະອົງຊົງປົກຄອງພະລາຊະ
ບັນລັງ ເຢຣູຊາເລັມ ສາມສິບເອັດປີ ແມ່ຂອງພະອົງຊົງພະນາມວ່າ ເຢດີດາ ນາງເປັນລາຊະທິ-
ດາຂອງ ອາດາຢາ ແລະເປັນຊາວເມືອງ ໂບຊະກາດ. 2ພະອົງປະຕິບັດຕາມພຣະປະສົງຂອງ
ພຣະຜູ້ເປັນເຈົ້າ ຊົງນັບຖື ແລະດຳເນີນຕາມແບບຢ່າງດາວິດ ຜູ້ເປັນບັນພະບູລຸດຂອງພະອົງ
ແລະເຊື່ອຟັງພຣະບັນຍັດຂອງ ພຣະເຈົ້າທຸກຢ່າງ.

## ປະໂລຫິດ ຮິນກີຢາພົບປຶ້ມພຣະທຳ

3ໃນລາຊະການປີທີສິບແປດຂອງເຈົ້າຊີວິດ ໂຢສີຢາ ພະອົງໄດ້ສົ່ງລາຊະເລຂາ ຊາຟານ
ລູກຊາຍຂອງ ອາຊາລີຢາ ແລະຫລານຊາຍຂອງ ເມຊຸນລຳ ໄປຍັງພຣະວິຫານຂອງ ພຣະຜູ້ເປັນ-
ເຈົ້າ. 4ພະອົງຊົງບອກລາວວ່າ, "ເຈົ້າຈົ່ງໄປຫາ ຮິນກີຢາ ມະຫາປະໂລຫິດ ແລະບອກໃຫ້ເພິ່ນ
ລາຍງານເງິນທີ່ພວກປະໂລຫິດໄດ້ເກັບຈາກປະຊາຊົນໃນທາງເຂົ້າວິຫານ. 5ບອກໃຫ້ພວກເຂົາ
ເອົາເງິນໃຫ້ພວກຫົວໜ້າຄົນງານປະຈຳພຣະວິຫານ ເພື່ອໃຫ້ພວກຄົນງານສ້ອມແຊມພຣະວິ-
ຫານ. 6ເຊັ່ນ ພວກຊ່າງໄມ້ ຊ່າງກໍ່ ແລະຊ່າງປູນ ໄປຊື້ໄມ້ ແລະກ້ອນຫີນສຳລັບສ້ອມແຊມ
ພຣະວິຫານໃໝ່. 7ບໍ່ຕ້ອງໃຫ້ພວກເຂົາເຮັດບັນຊີລາຍຈ່າຍເງິນນີ້ ເພາະພວກເຂົາທີ່ເຮັດວຽກຢູ່
ບ່ອນນັ້ນເປັນຄົນສັດຊື່."

8ຊາຟານ ໄດ້ນຳເອົາຄຳສັ່ງຂອງເຈົ້າຊີວິດໄປບອກປະໂລຫິດ ຮິນກີຢາ ແລ້ວຮິນກີຢາເລີຍ
ບອກຊາຟານວ່າ, "ຂ້າພະເຈົ້າໄດ້ພົບປຶ້ມພຣະທຳຢູ່ໃນພຣະວິຫານຂອງ ພຣະຜູ້ເປັນເຈົ້າ" ແລ້ວ
ຮິນກີຢາກໍໄດ້ເອົາປຶ້ມຫົວນັ້ນໃຫ້ຊາຟານອ່ານ. 9ຊາຟານໄດ້ກັບຄືນເມືອລາຍງານຕໍ່ເຈົ້າຊີວິດ
ວ່າ, "ຂ້າໃຊ້ຂອງພະອົງໄດ້ເອົາເງິນທີ່ຢູ່ໃນພຣະວິຫານຂອງ ພຣະຜູ້ເປັນເຈົ້າ ໃຫ້ແກ່ຫົວໜ້າຄົນ
ງານທີ່ປະຈຳການຢູ່ທີ່ນັ້ນແລ້ວ" 10ແລ້ວຊາຟານຂາບທູນຕໍ່ໄປອີກວ່າ, "ປະໂລຫິດ ຮິນກີຢາໄດ້
ເອົາປຶ້ມໃຫ້ຂ້ານ້ອຍ" ແລ້ວເພິ່ນກໍອ່ານໃຫ້ເຈົ້າຊີວິດຟັງ.

## ຜູ້ປະກາດພຣະທຳ ນາງຮຸນດາຖວາຍຄຳທຳນວາຍ

11ເມື່ອເຈົ້າຊີວິດໄດ້ຍິນເນື້ອຄວາມໃນພຣະທຳ ພະອົງກໍຊົງຈີກເຄື່ອງສະຫລອງພະອົງຍ້ອນ
ເສຍພະໄທ. 12ແລ້ວຊົງຮັບສັ່ງປະໂລຫິດ ຮິນກີຢາ ອາຮີການ ລູກຊາຍຂອງຊາຟານ ອັກໂບ
ລູກຊາຍຂອງ ມີກາຢາ ຊາຟານ ແລະທີ່ປຶກສາພະມະຫາກະສັດ. 13ອາສາຢາ ໂດຍບອກວ່າ
"ຈົ່ງພາກັນທູນຕໍ່ ພຣະຜູ້ເປັນເຈົ້າ ແທນເຮົາ ແລະປະຊາຊົນຢູດາທຸກຄົນກ່ຽວກັບຄຳສອນທີ່ມີຢູ່
ໃນປຶ້ມນັ້ນ ເລື່ອງນີ້ໃຫຍ່ແທ້ແມ່ນ ພຣະເຈົ້າຊົງພຣະພິໂລດພວກເຮົາ ຍ້ອນວ່າພວກປູ່ຍ່າຕາຍາຍ
ຂອງພວກເຮົາ ບໍ່ປະຕິບັດຕາມຖ້ອຍຄຳທີ່ຂຽນໄວ້ໃນປຶ້ມນີ້."

14ປະໂລຫິດ ຮິນກີຢາ ອາຮີການ ອັກໂບ ຊາຟານແລະອາສາຢາ ກໍພາກັນໄປຫາຜູ້ປະ-
ກາດພຣະຄຳທີ່ມີຊື່ວ່າ ຮຸນດາ ທີ່ນະຄອນເຢຣູຊາເລັມ ເຂດເມືອງໃໝ່ ຜົວຂອງນາງຮຸນດາຊື່-
ວ່າ ຊານລູມ ເພິ່ນເປັນລູກຊາຍຂອງຕິກວາ ຫລານຊາຍຂອງຮາຮັດ ຊານລູມເປັນຜູ້ຮັກສາ
ເຄື່ອງນຸ່ງຖືປະຈຳພຣະວິຫານ. 15ພວກທີ່ໄປຫານີ້ໄດ້ເລົ່າເລື່ອງສູ່ນາງຟັງ ນາງຈຶ່ງບອກໃຫ້ເຂົາ-

ເຈົ້າກັບຄືນເມືອຫາເຈົ້າຊີວິດ. [16]ແລະທູນຖ້ອຍຄຳຂອງພຣະຜູ້ເປັນເຈົ້າວ່າ, "ເຮົາຈະລົງໂທດ
ນະຄອນເຢຣູຊາເລັມ ຕະຫລອດທັງປະຊາຊົນທຸກຄົນ ຕາມເນື້ອຄວາມຢູ່ໃນປຶ້ມທີ່ເຈົ້າຊີວິດຢູດາ
ໄດ້ອ່ານນັ້ນ. [17]ພວກເຂົາໄດ້ເຫີນຫ່າງເຮົາໄປຖວາຍບູຊາພະອື່ນ ຊຶ່ງເປັນການຍົວະເຍົ້າໃຫ້ເຮົາ
ຄຽດຮ້າຍພວກເຂົາ ຄວາມຄຽດຮ້າຍຂອງເຮົາທີ່ຕົກໃສ່ນະຄອນເຢຣູຊາເລັມ ຈະບໍ່ເຊົາງ່າຍ.
[18]ສ່ວນເຈົ້າຊີວິດ ເຮົາ ພຣະຜູ້ເປັນເຈົ້າແຫ່ງອິສຣາເອນ ຂໍກ່າວດັ່ງນີ້ວ່າ, [19]ເມື່ອເຈົ້າໄດ້ຟັງ
ຖ້ອຍຄຳທຸກຂໍ້ທີ່ຂຽນໄວ້ໃນປຶ້ມນີ້ ແລ້ວ ເຈົ້າມີຄວາມແພງໃຈ ແລະຖ່ອມຕົວລົງຕໍ່ໜ້າເຮົາ ທັງ
ໄດ້ຈີກເສື້ອຜ້າ ແລະຮ້ອງໄຫ້ ເມື່ອເຈົ້າໄດ້ຍິນວ່າ ເຮົາຈະລົງໂທດນະຄອນເຢຣູຊາເລັມ ຕະ-
ຫລອດທັງປະຊາຊົນ ເຮົາຈະເຮັດໃຫ້ສະຖານທີ່ນີ້ເປັນໜ້າລັງກຽດ ແລະຖືກສາບແຊ່ງຍ້ອນວ່າ
ເຮົາໄດ້ຍິນຄຳອ້ອນວອນຂອງເຈົ້າແລ້ວ. [20]ເຮົາຈະບໍ່ໃຫ້ມີການລົງໂທດແບບນີ້ຕະຫລອດຊົ່ວຊີ-
ວິດຂອງເຈົ້າ ເຈົ້າຈະຕາຍໄປຢ່າງສະຫງົບສຸກ." ພວກເຂົາໄດ້ນຳເອົາຄຳຕອບນີ້ເມືອກາບທູນ
ເຈົ້າຊີວິດ.

# ບົດທີ 23

## ການປະຕິຍານຕົວຕໍ່ພຣະພັກພຣະເຈົ້າ

[1]ເຈົ້າຊີວິດ ໂຢສີຢາ ຊົງປ່າວປະກາດເອີ້ນເອົາພວກເຖົ້າແກ່ຊາວຢູດາ ແລະຊາວເຢຣູຊາ-
ເລັມ. [2]ແລ້ວພະອົງພ້ອມທັງພວກເຖົ້າແກ່ ພວກປະໂລຫິດພ້ອມພວກຜູ້ປະກາດພຣະທຳ ແລະ
ປະຊາຊົນທຸກຄົນ ທັງຜູ້ທຸກຍາກ ແລະຮັ່ງມີ ກໍຂຶ້ນໄປຍັງພຣະວິຫານຂອງພຣະຜູ້ເປັນເຈົ້າ ພະ
ອົງຊົງອ່ານຖ້ອຍຄຳທຸກຂໍ້ທີ່ກ່າວໄວ້ໃນປຶ້ມຄຳໝັ້ນສັນຍາທີ່ຄົ້ນພົບຢູ່ໃນພຣະວິຫານຂອງພຣະຜູ້-
ເປັນເຈົ້າສູ່ທຸກຄົນຟັງ. [3]ເຈົ້າຊີວິດຊົງຢືນຢູ່ຂ້າງເສົາ ແລະໄດ້ໃຫ້ຄຳໝັ້ນສັນຍາຕໍ່ພຣະຜູ້ເປັນເຈົ້າ
ວ່າ ຈະຖືຮັກສາຄຳສັ່ງ ແລະພຣະທຳຂອງພຣະອົງດ້ວຍສຸດຈິດສຸດໃຈ ເພື່ອເຮັດຕາມຂໍ້ຄວາມ
ໃນຄຳໝັ້ນສັນຍາທີ່ຂຽນໄວ້ໃນປຶ້ມຫົວນັ້ນ ປະຊາຊົນທຸກຄົນກໍພາກັນໃຫ້ຄຳປະຕິຍານວ່າ ຈະຖື
ຮັກສາຄຳໝັ້ນສັນຍານັ້ນ.

## ເຈົ້າໂຢສີຢາປະຕິຮູບສາດສະໜາຄັ້ງຍິ່ງໃຫຍ່

[4]ຕໍ່ມາ ເຈົ້າຊີວິດໄດ້ຊົງຮັບສັ່ງ ຮິນກີຢາ ມະຫາປະໂລຫິດ ພວກຜູ້ລອງປະໂລຫິດ ແລະ
ພວກຜູ້ເຝົ້າປະຕູ ໃຫ້ຍົກຍ້າຍສິ່ງຂອງທຸກຢ່າງທີ່ໃຊ້ສຳລັບຂາບໄຫວ້ພະບາອານ ພະອາເຊຣາ
ແລະດວງດາວຕ່າງໆ ອອກຈາກພຣະວິຫານໄປ ພະອົງໄດ້ເຜົາສິ່ງເຫລົ່ານີ້ຢູ່ໃກ້ຮ່ອມພູ ກິດ-
ໂຣນ ນອກນະຄອນເຢຣູຊາເລັມ ແລ້ວຊົງໃຫ້ຫຸບເອົາຂີ້ຝຸ່ນຂອງມັນໄປເມືອງເບັດເອນ. [5]ພະອົງ
ໄດ້ຂັບໄລ່ພວກປະໂລຫິດຈອມປອມ ທີ່ເຈົ້າຊີວິດຢູດາໄດ້ແຕ່ງຕັ້ງໃຫ້ຖວາຍເຄື່ອງບູຊາ ຢູ່ໃນ
ບ່ອນສັກສິດຕ່າງໆ ຢູ່ໃນເມືອງຢູດາ ແລະຢູ່ໃນບ້ານໃກ້ເຮືອນຄຽງນະຄອນເຢຣູຊາເລັມ ຄື
ພວກທີ່ຖວາຍເຄື່ອງບູຊາແກ່ພະບາອານ ພະອາທິດ ພະຈັນ ແລະດວງດາວຕ່າງໆ. [6]ເພິ່ນໄດ້
ຍ້າຍເສົາຫີນສັກສິດໃນພຣະວິຫານ ຂອງພຣະຜູ້ເປັນເຈົ້າອອກຈາກນະຄອນເຢຣູຊາເລັມ ແລ້ວ
ເອົາໄປໄວ້ໃນຮ່ອມພູກິດໂຣນ ແລະໄດ້ເຜົາມັນຢູ່ທີ່ນັ້ນ ແລ້ວໄດ້ຕີໃຫ້ມັນມຸ່ນເປັນຂີ້ເຖົ່າ ໂຮຍໃສ່
ຂຸມຝັງສົບຄົນທຳມະດາ. [7]ພະອົງໄດ້ທຳລາຍບ່ອນຢູ່ຂອງພວກໂສເພນີ ໃນພຣະວິຫານຂອງ

ພຣະຜູ້ເປັນເຈົ້າ (ຊຶ່ງເປັນບ່ອນທີ່ພວກຜູ້ຍິງຕ່ຳເສື້ອໃຫ້ອາເຊຣາ).
[8]ພະອົງນຳເອົາພວກປະໂລຫິດທຸກຄົນໃນເມືອງຢູດາ ແລະທົ່ວທັງປະເທດ ມາຍັງນະຄອນ ເຢ-
ຣູຊາເລັມ ແລ້ວທຳລາຍສະຖານທີ່ສັກສິດໃຫ້ເສຍຄວາມສັກສິດ ຄື ບ່ອນທີ່ພວກປະໂລຫິດ
ເຫລົ່ານັ້ນຖວາຍເຄື່ອງບູຊາ ພະອົງຍັງໄດ້ທຳລາຍຫໍຜີຮ້າຍຢູ່ໃກ້ປະຕູເມືອງທີ່ໂຢຊວຍ ຜູ້ປົກ-
ຄອງເມືອງໄດ້ສ້າງໄວ້ ຫໍຜີນັ້ນຢູ່ທາງເບື້ອງຊ້າຍຂອງປະຕູໃຫຍ່ທາງເຂົ້າເມືອງ. [9]ພວກປະໂລ-
ຫິດເຫລົ່ານີ້ໄປຮັບໃຊ້ທີ່ພຣະວິຫານບໍ່ໄດ້ ແຕ່ໄດ້ຮັບອະນຸຍາດໃຫ້ກິນເຂົ້າຈີ່ບໍ່ໃສ່ເຊື້ອແປ້ງເໝືອນ
ດັ່ງປະໂລຫິດຄົນອື່ນໆ ໄດ້. [10]ພະອົງໄດ້ທຳລາຍເຕົາເຜົາບູຊາໃນຮ່ອມພູເບັນ-ຮິນໂນມ ເພື່ອ
ວ່າຈະບໍ່ມີຜູ້ໃດເອົາລູກຫລານ ຫລືລູກສາວຂອງຕົນໄປເຜົາບູຊາພະໂມເລັກ. [11]ພະອົງໄດ້ເອົາ
ມ້າທີ່ເຈົ້າຊີວິດຢູດາ ໄດ້ອຸທິດຖວາຍແກ່ພະອາທິດນັ້ນໜີ ພ້ອມທັງເຜົາລົດທີ່ໃຊ້ໃນເວລາຂາບ
ໄຫວ້ພະອາທິດ ມ້າກັບລົດນີ້ໄດ້ຢູ່ໃນເດີ່ນພຣະວິຫານໃກ້ໆປະຕູ ແລະໃກ້ບ່ອນຢູ່ຂອງກົມມະວັງ
ນາທານ ເມເລັກ. [12]ພະອົງໄດ້ທຳລາຍແທ່ນບູຊາທີ່ເຈົ້າຊີວິດຢູດາ ໄດ້ສ້າງໄວ້ເທິງຫລັງຄາພຽງ
ພະລາຊະວັງ ຢູ່ເໜືອພະລາຊະສຳນັກຂອງເຈົ້າຊີວິດອາຮາດ ພ້ອມທັງແທ່ນບູຊາສອງບ່ອນທີ່
ເຈົ້າມານາເຊໄດ້ສ້າງໄວ້ໃນເດີ່ນພຣະວິຫານ ພະອົງໄດ້ທຳລາຍມັນເສຍໝົດ ແລ້ວເອົາໄປຖິ້ມ
ລົງໃນຮ່ອມພູກິດໂຣນ. [13]ໂຢສີຢາໄດ້ທຳລາຍແທ່ນບູຊາທີ່ເຈົ້າໂຊໂລໂມນ ໄດ້ສ້າງຂຶ້ນຢູ່ທາງ
ທິດຕາເວັນອອກຂອງນະຄອນເຢຣູຊາເລັມ ຢູ່ທາງທິດໃຕ້ຂອງພູໝາກກອກ ແທ່ນນີ້ພວກເຂົາ
ໄດ້ສ້າງໄວ້ສຳລັບຂາບໄຫວ້ ພະເຄໂມດຂອງຊາວໂມອາບ ແລະພະໂມເລັກຂອງຊາວອຳໂມນ.
[14]ພະອົງຍັງໄດ້ທຳລາຍເສົາຫີນສັກສິດລົງ ແລະຕັດຫລັກໄມ້ສັກສິດອີກ ແລ້ວເອົາກະດູກຄົນຖິ້ມ
ໄວ້ໃນບ່ອນນັ້ນທັງໝົດ.
[15]ຍິ່ງໄປກວ່ານັ້ນ ພະອົງຍັງໄດ້ທຳລາຍບ່ອນນະມັດສະການທີ່ເບັດເອນ ຊຶ່ງເປັນສະຖານທີ່
ເຢໂຣໂບອາມ ລູກຊາຍຂອງເນບັດໄດ້ສ້າງໄວ້ ແລະພາຊາວອິສຣາເອນເຮັດບາບຢູ່ທີ່ນັ້ນ ພະ
ອົງໄດ້ທຳລາຍແທ່ນບູຊາຈົນຝຸ່ນ ແລະຈູດຫລັກສັກສິດທີ່ສ້າງບູຊາ ພະອາເຊຣາ. [16]ເມື່ອໂຢສີ-
ຢາຫລຽວອ້ອມໄປມາກໍຊຶ່ງເຫັນຂຸມຝັງສົບຢູ່ຂ້າງພູນ້ອຍ ພະອົງຈຶ່ງຊົງເອົາກະດູກຄົນຈາກຂຸມຝັງ
ສົບນັ້ນມາເຜົາເທິງແທ່ນບູຊາ ເພື່ອໃຫ້ແທ່ນບູຊານັ້ນເສຍຄວາມສັກສິດ ຊຶ່ງເປັນໄປຕາມພຣະຄຳ
ທີ່ຜູ້ປະກາດພຣະທຳຂອງພຣະເຈົ້າໄດ້ປະກາດໄວ້ໃນສະໄໝກ່ອນໆ ຄື ເວລາທີ່ ເຢໂຣໂບອາມ
ຢືນຢູ່ຂ້າງແທ່ນບູຊາ ໃນມື້ຈັດງານກິນລ້ຽງນັ້ນ ແລະເມື່ອເຈົ້າໂຢສີຢາຫລຽວອ້ອມໄປມາ ພະອົງ
ກໍຫອດພະເນດເຫັນຂຸມຝັງສົບຜູ້ປະກາດພຣະທຳ ຊຶ່ງເປັນຜູ້ບອກເຫດການເຫລົ່ານີ້ລ່ວງໜ້າໄວ້.
[17]ພະອົງຈຶ່ງຊົງຖາມວ່າ, “ບ່ອນນີ້ແມ່ນຂຸມຝັງສົບຂອງໃຜ?” ຊາວເມືອງເບັດເອນຈຶ່ງຕອບວ່າ,
“ແມ່ນຂຸມຝັງສົບຂອງຜູ້ປະກາດພຣະທຳຊາວຢູດາ ຊຶ່ງເປັນຜູ້ທຳນວາຍສິ່ງທີ່ພະອົງກຳລັງເຮັດຢູ່
ນີ້.” [18]ເຈົ້າຊີວິດຈຶ່ງສັ່ງວ່າ, “ຖ້າເຊັ່ນນັ້ນ ປະໄວ້ນັ້ນແຫລະ ຢ່າໃຫ້ໃຜໄປລົບກວນກະດູກຂອງ
ລາວເດີ້.” ດັ່ງນັ້ນ ພວກເຂົາຈຶ່ງບໍ່ແຕະຕ້ອງກະດູກນັ້ນ ພ້ອມທັງກະດູກຂອງຜູ້ປະກາດພຣະຄຳ
ຊາວຊາມາເຣຍ.
[19]ໂຢສີຢາ ຍັງໄດ້ທຳລາຍບ່ອນສັກກະລະບູຊາທັງໝົດຢູ່ເທິງບ່ອນສັກສິດທີ່ເຈົ້າຊີວິດອິສຣາ-
ເອນໄດ້ສ້າງໄວ້ໃນທຸກໆຫົວເມືອງ ເພາະການສ້າງນີ້ເປັນເຫດໃຫ້ພຣະຜູ້ເປັນເຈົ້າຊົງພຣະພິ-

ໂລດ ພະອົງໄດ້ທຳລາຍບ່ອນເຫລົ່ານີ້ເໝືອນດັ່ງໄດ້ທຳລາຍທີ່ເບັດເອນ. [20]ພະອົງໄດ້ຂ້າພວກ
ປະໂລຫິດຈອມປອມທຸກຄົນທີ່ຢູ່ຕາມບ່ອນສັກສິດເທິງແທ່ນບູຊານັ້ນ ແລະໄດ້ເຜົາກະດູກຄົນໃສ່
ເທິງແທ່ນບູຊາທຸກມື້ ແລ້ວໄດ້ກັບຄືນເມືອນະຄອນເຢຣູຊາເລັມ.
[21]ເຈົ້າໂຢສິຢາ ຈຶ່ງອອກຄຳສັ່ງແກ່ໄພ່ພົນລາຊະດອນທຸກຄົນວ່າ, “ຈົ່ງສະເຫລີມສະຫລອງວັນ
ປັດສະຄາ ເພື່ອເປັນການຖວາຍກຽດແດ່ພຣະຜູ້ເປັນເຈົ້າ ຕາມຄຳແນະນຳທີ່ມີໃນປຶ້ມຄຳໝັ້ນ-
ສັນຍານັ້ນ.” [22]ນັບຕັ້ງແຕ່ມື້ທີ່ພວກຜູ້ປົກຄອງໄດ້ປົກຄອງອິສຣາເອນ ເຖິງສະໄໝຂອງເຈົ້າຊີວິດ
ອິສຣາເອນ ແລະເຈົ້າຊີວິດຢູດາ ບໍ່ເຄີຍມີການສະຫລອງປັດສະຄາດັ່ງນີ້ເລີຍ. [23]ຕໍ່ມາໃນລາ-
ຊະການປີທີແປດຂອງເຈົ້າຊີວິດ ໂຢສິຢາຈຶ່ງມີການສະເຫລີມສະຫລອງປັດສະຄາອີກທີ່ນະຄອນ
ເຢຣູຊາເລັມ ເພື່ອຖວາຍກຽດແດ່ພຣະຜູ້ເປັນເຈົ້າ.
[24]ຍິ່ງໄປກວ່ານີ້ອີກ ເພື່ອເປັນໄປຕາມພຣະຄຳທີ່ຂຽນໄວ້ໃນປຶ້ມທີ່ປະໂລຫິດຮິນກີຢາ ໄດ້ພົບຢູ່
ໃນພຣະວິຫານ ເຈົ້າໂຢສິຢາໄດ້ກຳຈັດຂັບໄລ່ໝໍຜີ ໝໍດູ ໝໍເວດມົນກົນຄາຖາ ຮ້ານພະ ແລະ
ຮູບເຄົາລົບອື່ນໆ ຕະຫລອດທັງສິ່ງຂອງທີ່ໃຊ້ນະມັດສະການພະຕ່າງໆ ໃນປະເທດຢູດາ ແລະ
ນະຄອນເຢຣູຊາເລັມ. [25]ບໍ່ເຄີຍມີເຈົ້າຊີວິດອົງໃດທີ່ຂຶ້ນຄອງລາຊະສົມບັດກ່ອນພະອົງໄດ້ຮັບໃຊ້
ພຣະຜູ້ເປັນເຈົ້າເໝືອນດັ່ງພະອົງ ຄື ພະອົງໄດ້ຮັບໃຊ້ຢ່າງສຸດຈິດສຸດໃຈ ສຸດກຳລັງວັງຊາ
ຍ້ອນວ່າພະອົງໄດ້ເຊື່ອຟັງພຣະທຳທີ່ໂມເຊໄດ້ຂຽນໄວ້ ເຈົ້າຊີວິດອົງຕໍ່ມາບໍ່ຄືພະອົງເລີຍ.
[26]ເຖິງປານນີ້ກໍຕາມ ພຣະຜູ້ເປັນເຈົ້າຍັງບໍ່ເຊົາພຣະພິໂລດປະເທດຢູດາຍ້ອນການກະທຳ
ຂອງເຈົ້າມານາເຊ. [27]ພຣະຜູ້ເປັນເຈົ້າຊົງສັ່ງວ່າ, “ເຮົາຈະກຳຈັດພວກຢູດາໃຫ້ໜີຈາກເຮົາດັ່ງທີ່
ເຮົາໄດ້ເຮັດຕໍ່ອິສຣາເອນເຮົາຈະປະຖິ້ມນະຄອນເຢຣູຊາເລັມ ເມືອງທີ່ເຮົາເລືອກໄວ້ນີ້ ພ້ອມທັງ
ພຣະວິຫານທີ່ເຮົາໄດ້ບອກວ່າ ເປັນບ່ອນຢູ່ຂອງເຮົາ.

## ໂຢສິຢາສິ້ນພະຊົນ

[28]ສິ່ງອື່ນໆ ທີ່ເຈົ້າໂຢສິຢາ ໄດ້ກະທຳໄດ້ບັນທຶກໄວ້ໃນປຶ້ມຊີວະປະຫວັດຂອງເຈົ້າຊີວິດຢູດາ.
[29]ໃນລາຊະການຂອງກະສັດໂຢສິຢາ ກະສັດຟາຣາໂອ ເນໂກ ເຈົ້າຊີວິດແຫ່ງເອຢິບໄດ້ນຳ
ກອງທັບໄປຊ່ອຍເຈົ້າຊີວິດແຫ່ງອັດຊີເຣຍທີ່ແມ່ນ້ຳເອຟຣາດ ເຈົ້າໂຢສິຢາ ພະຍາຍາມຍັບຍັ້ງ
ກອງທັບເອຢິບໄວ້ທີ່ເມກິດໂດ ຈົນພະອົງຖືກຂ້າໃນສະໜາມຮົບ. [30]ພວກຂ້າລາຊະການໄດ້ນຳ
ເອົາສົບຂອງພະອົງໃສ່ລົດມ້າອອກມາຈາກເມກິດໂດ ໄປຍັງນະຄອນເຢຣູຊາເລັມ ແລະຝັງໄວ້
ໃນຂຸມຝັງສົບຂອງພວກກະສັດ. ປະຊາຊົນຢູດາໄດ້ເລືອກເອົາເຢໂຮອາຮາດລາຊະໂອລົດຂອງ
ໂຢສິຢາ ແລ້ວເອົານ້ຳມັນທົດສົງພະອົງໃຫ້ເປັນເຈົ້າຊີວິດແທນພະບິດາ.

## ຟາຣາໂອປົດກະສັດໂຢອາຮັດອອກຈາກລາຊະສົມບັດ[ກ]

[31]ເຢໂຮອາຮາດມີອາຍຸຊາວສາມປີເມື່ອພະອົງເລີ່ມປົກຄອງ ແລະໄດ້ປົກຄອງໃນເມືອງເຢຣູ-
ຊາເລັມສາມເດືອນ ແມ່ຂອງພະອົງມີຊື່ວ່າ ນາງຮາມູຕານລູກສາວຂອງເຢເຣມີຢາຊາວລິບນາ
[32]ພະອົງໄດ້ເຮັດສິ່ງທີ່ຊົ່ວຮ້າຍໃນສາຍພຣະເນດຂອງພຣະຜູ້ເປັນເຈົ້າຕາມທຸກຢ່າງທີ່ບັນພະບູລຸດ
ຂອງພະອົງໄດ້ເຮັດ [33]ແລະຟາຣາໂອ ເນໂກກໍຈັບພະອົງຂັງໄວ້ທີ່ຣິບລາໃນແຜ່ນດິນຮາມັດ

[ກ]2ຂຄວ 36:12 [ຂ]2ຂຄວ 36:45

ເພື່ອບໍ່ໃຫ້ພະອົງປົກຄອງໃນ ເຢຣູຊາເລັມ ແລະກຳນົດບັນນາການຈາກແຜ່ນດິນນັ້ນເປັນເງິນໜຶ່ງ
ຮ້ອຍຕະລັນຕົນ ແລະຄຳໜຶ່ງຕະລັນຕົນ.

## ເຢໂຮຢາກິມປົກຄອງເໜືອຢູດາ[ຂ]

34ຟາຣາໂອ ເນໂກ ໄດ້ຕັ້ງ ເອລີຢາກິມ ລູກຊາຍ ໂຢສີຢາ ເປັນກະສັດແທນ ໂຢສີຢາ ພໍ່ຂອງພະ
ອົງ ແລະປ່ຽນຊື່ຂອງພະອົງເປັນ ເຢໂຮຢາກິມ ແຕ່ໄດ້ພາ ເຢໂຮອາຮາດ ໄປ ເອຢິບ ແລະເສຍຊີ-
ວິດຢູ່ບ່ອນນັ້ນ 35ເຢໂຮຢາກິມ ກໍມອບເງິນ ແລະຄຳແກ່ ຟາຣາໂອ ແຕ່ພະອົງໄດ້ເກັບພາສີຈາກ
ຊາວແຜ່ນດິນເພື່ອມອບເງິນຕາມຄຳສັ່ງຂອງ ຟາຣາໂອ ພະອົງໄດ້ເລັ່ງລັດເອົາເງິນແລະຄຳຂອງ
ປະຊາຊົນຈາກທຸກຄົນຕາມການປະເມີນ ເພື່ອມອບໃຫ້ແກ່ຟາຣາໂອ ເນໂກ.

36ເຢໂຮຢາກິມ ມີອາຍຸຊາວຫ້າປີເມື່ອພະອົງໄດ້ເລີ່ມປົກຄອງ ແລະໄດ້ປົກຄອງໃນເມືອງ ເຢຣູ-
ຊາເລັມ ສິບເອັດປີ ແມ່ຂອງພະອົງມີຊື່ວ່າ ເຊບີດາ ລູກສາວ ເປດາຢາ ຊາວ ຣູມາ 37ພະອົງໄດ້ເຮັດ
ສິ່ງທີ່ຊົ່ວຮ້າຍໃນສາຍພຣະເນດຂອງ ພຣະຜູ້ເປັນເຈົ້າ ຕາມທຸກສິ່ງທີ່ບັນພະບູລຸດຂອງພະອົງໄດ້
ເຮັດມາ.

# ບົດທີ 24

## ຊີວະປະຫວັດຫຍໍ້ຂອງເຢໂຮຢາກິມ

1ໃນຂະນະທີ່ເຈົ້າ ເຢໂຮຢາກິມ ຂຶ້ນເປັນກະສັດ, ເຈົ້າ ເນບູກາດເນັດຊາ ກະສັດແຫ່ງ ບາບີໂລນ
ໄດ້ບຸກລຸກ ຢູດາ ແລະເຈົ້າ ເຢໂຮຢາກິມ ໄດ້ຖືກບັງຄັບໃຫ້ຍອມຢູ່ພາຍໃຕ້ການປົກຄອງຂອງເພິ່ນ
ເປັນເວລາສາມປີ ແລ້ວພະອົງຈຶ່ງເຮັດການກະບົດຂຶ້ນ. 2ພຣະຜູ້ເປັນເຈົ້າ ໄດ້ຊົງສັ່ງກອງທັບ ບາ-
ບີໂລນ, ຊີເຣຍ, ໂມອາບ, ແລະ ອຳໂມນ ມາຕໍ່ສູ້ກະສັດ ເຢໂຮຢາກິມ ເພື່ອທຳລາຍ ຢູດາ ຕາມທີ່
ພຣະຜູ້ເປັນເຈົ້າ ຊົງກ່າວໄວ້ຜ່ານທາງຜູ້ປະກາດພຣະທຳທີ່ຮັບໃຊ້ພຣະອົງ. 3ເຫດການນີ້ໄດ້ເກີດ
ຂຶ້ນຕາມຄຳສັ່ງຂອງ ພຣະຜູ້ເປັນເຈົ້າ ເພື່ອກຳຈັດຊາວ ຢູດາ ອອກໃຫ້ພົ້ນສາຍພຣະເນດຂອງ
ພຣະອົງ ເພາະການບາບທັງໝົດທີ່ກະສັດ ມານາເຊ ໄດ້ເຮັດນັ້ນ. 4ໂດຍສະເພາະແລ້ວ ຍ້ອນ
ເພິ່ນໄດ້ຂ້າຄົນທີ່ບໍ່ມີຄວາມຜິດ ຈົນຖະໜົນກຸງ ເຢຣູຊາເລັມ ນອງໄປດ້ວຍເລືອດ ພຣະຜູ້ເປັນເຈົ້າ
ບໍ່ອາດຍົກໂທດໃຫ້ກະສັດ ມານາເຊ ໃນເລື່ອງນີ້ໄດ້.

5ສິ່ງອື່ນໆທີ່ກະສັດ ເຢໂຮຢາກິມ ໄດ້ເຮັດແມ່ນໄດ້ຖືກບັນທຶກໄວ້ໃນປຶ້ມປະຫວັດສາດຂອງບັນ-
ດາກະສັດແຫ່ງ ຢູດາ. 6ກະສັດ ເຢໂຮຢາກິມ ໄດ້ຕາຍໄປ ແລະລູກຊາຍຂອງພະອົງຄືເຈົ້າ ເຢໂຮ-
ຢາກິນ ກໍຂຶ້ນຄອງອຳນາດ ແທນ. 7ກະສັດ ເອຢິບ ບໍ່ໄດ້ຍົກທັບອອກຈາກປະເທດ ເອຢິບ ອີກ
ເພາະປັດຈຸບັນນີ້ ກະສັດແຫ່ງ ບາບີໂລນ ໄດ້ຄອບຄອງດິນແດນທັງໝົດທີ່ເຄີຍເປັນຂອງ ເອຢິບ
ນັບຕັ້ງແຕ່ແມ່ນ້ຳ ເອຟຣາດ ຈົນຮອດເຂດແດນຕອນເໜືອຂອງ ເອຢິບ.

8ເຈົ້າ ເຢໂຮຢາກິນ ຂຶ້ນຄອງລາຊະສົມບັດ ເມື່ອອາຍຸສິບແປດປີ ພະອົງໄດ້ເປັນເຈົ້າຊີວິດຢູ່ນະ-
ຄອນ ເຢຣູຊາເລັມ ສາມເດືອນ ພະມານດາຂອງພະອົງຊົງພະນາມວ່າ ພະນາງ ເນຮູຊະຕາ ເປັນ
ລາຊະທິດາຂອງ ເອນນາທານ ຊາວ ເຢຣູຊາເລັມ. 9ເຈົ້າ ເຢໂຮຢາກິນ ໄດ້ເຮັດສິ່ງທີ່ ພຣະຜູ້ເປັນ-
ເຈົ້າບໍ່ຊົງພໍພຣະໄທຄືກັບພະບິດາຂອງພະອົງ.

## ເຢໂຮຢາກິນພ້ອມທັງພວກເຈົ້ານາຍຖືກຈັບໄປເປັນຊະເລີຍທີ່ກຸງບາບີໂລນ

[10]ໃນເວລານັ້ນ ກອງທັບຂອງເຈົ້າເນບູກາດເນັດຊາ ເຈົ້າຊີວິດກຸງບາບີໂລນ ໄດ້ມຸ້ງໜ້າສູ່
ນະຄອນເຢຣູຊາເລັມ ແລະອ້ອມເມືອງໄວ້. [11]ໃນຂະນະທີ່ກອງທັບຂອງພະອົງອ້ອມເມືອງຢູ່ນັ້ນ
ເຈົ້າເນບູກາດເນັດຊາ ໄດ້ສະເດັດມາຍັງນະຄອນເຢຣູຊາເລັມ. [12]ແລ້ວເຢໂຮຢາກິນເຈົ້າຊີວິດ
ຢູດາພ້ອມທັງພະມານດາ ແລະພະລາຊະວົງ ພວກນາຍທະຫານ ແລະພວກເຈົ້ານາຍກໍຍອມ
ຈຳນົນຕໍ່ເຈົ້າຊີວິດກຸງບາບີໂລນ ທຸກຄົນຈຶ່ງຖືກເຈົ້າເນບູກາດເນັດຊາ ຈັບໄປເປັນຊະເລີຍ ຊຶ່ງ
ເປັນປີທີແປດແຫ່ງລາຊະການຂອງພະອົງ. [13]ເຈົ້າເນບູກາດເນັດຊາໄດ້ກວາດເອົາຊັບສິນເງິນ
ຄຳໃນພຣະວິຫານຂອງພຣະຜູ້ເປັນເຈົ້າ ແລະໃນພະລາຊະວັງໄປໝົດ ພະອົງໄດ້ທັບເອົາເຄື່ອງ-
ໃຊ້ທີ່ເຈົ້າໂຊໂລໂມນ ໄດ້ເຮັດດ້ວຍຄຳໃນພຣະວິຫານຂອງພຣະຜູ້ເປັນເຈົ້າ ຊຶ່ງການນີ້ເປັນໄປ
ຕາມທີ່ພຣະຜູ້ເປັນເຈົ້າໄດ້ຊົງບອກລ່ວງໜ້າແລ້ວ. [14]ພະອົງໄດ້ກວາດເອົາຊາວນະຄອນເຢຣູຊາ-
ເລັມ ບັນດາພວກເຈົ້ານາຍທີ່ມີຊື່ສຽງທຸກຄົນໄປເປັນຊະເລີຍ ທັງໝົດນີ້ມີຢູ່ສິບພັນຄົນ ນອກ-
ຈາກນີ້ ພະອົງຍັງໄດ້ເອົາຊ່າງຝີມືດີ ແລະຊ່າງໂລຫະໄປນຳ ແລະໄດ້ປະໄວ້ແຕ່ຄົນທຸກຍາກ
ເຫລືອໄວ້ໃນປະເທດ. [15]ພະອົງໄດ້ຈັບ ເຢໂຮຢາກິນ ພ້ອມທັງພະມານດາ ແລະພະລາຊະວົງ
ພວກມະເຫສີ ແລະພວກເຈົ້ານາຍທຸກຄົນຢູ່ໃນປະເທດໄປສູ່ກຸງບາບີໂລນ. [16]ຜູ້ທີ່ມີໜ້າທີ່ສຳຄັນມີ
ເຈັດພັນຄົນ ຊ່າງຝີມືດີ ແລະຊ່າງໂລຫະໜຶ່ງພັນຄົນ ບຸກຄົນເຫລົ່ານີ້ມີຄວາມແຂງແຮງ ແລະ
ສາມາດເປັນທະຫານໄດ້. [17]ເຈົ້າຊີວິດກຸງບາບີໂລນ ໄດ້ແຕ່ງຕັ້ງ ມັດຕານີຢາ ລູກຊາຍເຢໂຮ-
ຢາກິນ ຂຶ້ນເປັນເຈົ້າຊີວິດຂອງຊາວຢູດາ ໂດຍປ່ຽນຊື່ໃຫ້ໃໝ່ວ່າ ເຈົ້າເຊເດກີຢາ.

## ຊີວະປະຫວັດຫຍໍ້ຂອງ ເຊເດກີຢາ

[18]ເຈົ້າເຊເດກີຢາ ຂຶ້ນຄອງລາຊະສົມບັດທີ່ນະຄອນ ເຢຣູຊາເລັມເມື່ອອາຍຸຊາວເອັດປີ ແລະ
ເປັນເຈົ້າຊີວິດຢູ່ນະຄອນເຢຣູຊາເລັມເປັນເວລາສິບເອັດປີ ພະມານດາຂອງພະອົງຊົງພະນາມ
ວ່າ ຮາມຸຕານ ເປັນລາຊະທິດາຂອງ ເຢເຣມີຢາຊາວລິບນາ. [19]ພະອົງໄດ້ເຮັດສິ່ງທີ່ພຣະຜູ້-
ເປັນເຈົ້າບໍ່ພໍພຣະໄທດັ່ງດຽວກັນກັບເຈົ້າເຢໂຮຢາກິມ.

[20]ພຣະຜູ້ເປັນເຈົ້າຊົງພຣະພິໂລດຊາວນະຄອນເຢຣູຊາເລັມ ແລະຊາວຢູດາຫລາຍ ພຣະອົງ
ໄດ້ຊົງຂັບໄລ່ໃຫ້ພວກເຂົາໜີພົ້ນຈາກສາຍພຣະເນດຂອງພຣະອົງ.

# ບົດທີ 25

## ເຊເດກີຢາຖືກຈັບໄປເປັນຊະເລີຍທີ່ກຸງ ບາບີໂລນ

[1]ເຈົ້າເຊເດກີຢາໄດ້ກະບົດຕໍ່ສູ້ເຈົ້າຊີວິດບາບີໂລນ ແລ້ວເຈົ້າເນບູກາດເນັດຊາ ເຈົ້າຊີວິດ
ບາບີໂລນໄດ້ຍົກທັບມາຕີນະຄອນເຢຣູຊາເລັມໃນປີທີເກົ້າແຫ່ງລາຊະການຂອງເຈົ້າເຊເດກີຢາ
ຊຶ່ງກົງກັບວັນທີສິບຂອງເດືອນສິບ ພະອົງໄດ້ມາຕັ້ງຄ້າຍຢູ່ນອກເມືອງ ແລະໄດ້ກອງດິນຂຶ້ນຕາມ
ກຳແພງເພື່ອບຸກໂຈມຕີ. [2]ນະຄອນນີ້ໄດ້ຖືກອ້ອມໄວ້ມາຈົນຮອດປີທີສິບເອັດແຫ່ງລາຊະການ
ຂອງເຈົ້າ ເຊເດກີຢາ. [3]ຕໍ່ມາ ໃນວັນທີເກົ້າຂອງເດືອນສີ່ປີດຽວກັນນັ້ນ ໄດ້ມີການອຶດຢາກຢ່າງ
ຮ້າຍແຮງຈົນປະຊາຊົນບໍ່ມີອາຫານກິນ. [4]ແລະກຳແພງເມືອງບາງບ່ອນກໍຖືກສັດຕູທຳລາຍລົງ

ສະນັ້ນ ເຈົ້າຊີວິດກັບພວກທະຫານຈຶ່ງຫລົບໜີອອກໄປໃນຕອນກາງຄືນ ທັງໆ ທີ່ພວກບາບີ-
ໂລນກຳລັງອ້ອມເມືອງຢູ່ ພວກເຂົາໄດ້ອອກໄປທາງປະຕູເມືອງ ລະຫວ່າງກຳແພງທັງສອງຂ້າງ
ຊຶ່ງເປັນບ່ອນທີ່ໃກ້ກັບສວນຂອງເຈົ້າຊີວິດ ແລ້ວກໍມຸ່ງໜ້າໄປທາງຮ່ອມພູຢໍແດນ. 5ພວກທະຫານ
ບາບີໂລນໄດ້ໄລ່ຕິດຕາມເຈົ້າຊີວິດ ເຊເດກີຢາໄປ ແລະທັນພະອົງໄດ້ທີ່ທົ່ງນາໃກ້ເມືອງເຢຣິໂກ
ສ່ວນທະຫານຂອງພະອົງໄດ້ປະພະອົງໜີໄປ. 6ພວກທະຫານບາບີໂລນຈັບເຈົ້າເຊເດກີຢາໄປ
ໃຫ້ເຈົ້າ ເນບູກາດເນັດຊາຢູ່ເມືອງ ຣິບລາ ແລະພະອົງກໍຖືກຕັດສິນຢູ່ທີ່ນັ້ນ. 7ເຈົ້າຊີວິດບາບີ-
ໂລນ ໄດ້ຂ້າພວກລາຊະໂອລົດຂອງເຈົ້າ ເຊເດກີຢາ ຕໍ່ໜ້າຕໍ່ຕາເຈົ້າເຊເດກີຢາເອງ ແລ້ວ
ເຈາະໜ່ວຍຕາເຈົ້າເຊເດກີຢາອອກ ລ່າມໂສ້ພະອົງໄວ້ ແລະນຳພະອົງໄປຍັງກຸງບາບີໂລນ.

## ນະຄອນເຢຣູຊາເລັມຖືກທຳລາຍ ແລະປະຊາຊົນກໍຖືກກວາດໄປເປັນຊະເລີຍ

8ໃນລາຊະການປີທີສິບເກົ້າ ວັນທີສິບເຈັດເດືອນຫ້າຂອງເຈົ້າເນບູກາດເນັດຊາ ເຈົ້າຊີວິດ
ປະເທດບາບີໂລນ ເນບູຊາຣາດານ ທີ່ປຶກສາ ແລະຜູ້ບັນຊາການຄົນໜຶ່ງຂອງພະອົງ ໄດ້ເຂົ້າ
ໄປໃນນະຄອນເຢຣູຊາເລັມ ແລະຈູດພຣະວິຫານຂອງພຣະຜູ້ເປັນເຈົ້າ. 9ຈູດພະລາຊະວັງ
ແລະເຮືອນຊານທຸກຫລັງຂອງເຈົ້ານາຍຜູ້ສຳຄັນ. 10ພວກທະຫານຂອງພະອົງໄດ້ທຳລາຍກຳ-
ແພງເມືອງ. 11ເນບູຊາຣາດານ ໄດ້ຈັບປະຊາຊົນທີ່ຍັງຄ້າງເຫລືອຢູ່ໃນເມືອງພ້ອມທັງພວກຊ່າງ
ຝີມືດີ ຕະຫລອດທັງພວກທີ່ອອກມາສະຫວາມິພັກຕໍ່ຊາວບາບີໂລນ ໄປເປັນຊະເລີຍຢູ່ທີ່ກຸງບາ-
ບີໂລນ. 12ແຕ່ລາວໄດ້ປະໃຫ້ຄົນທຸກຍາກທີ່ສຸດບໍ່ມີໄຮ່ນາໄວ້ໃນປະເທດ ເພື່ອເປັນຄົນເຮັດສວນ
ອະງຸ່ນ ແລະເຮັດໄຮ່ນາ.

13ຊາວບາບີໂລນໄດ້ທັບເສົາທອງ ທັບດິນເສົາ ແລະຂັນນ້ຳທອງສຳລິດໃນພຣະວິຫານຂອງ
ພຣະຜູ້ເປັນເຈົ້າ ແລ້ວເອົາທອງນັ້ນໄປຍັງກຸງບາບີໂລນ. 14ພວກເຂົາຍັງໄດ້ຂົນເອົາເຄື່ອງໃຊ້
ສຳລັບທຳຄວາມສະອາດແທ່ນບູຊາ ຄື ສຽມ ຊວ້ານ ຄຸໃສ່ຂີ້ເຖົ່າໄຟ ຖາດແລະມີດຕັດໃສ້ຕະ-
ກຽງ ໂອໃສ່ເລືອດເວລາຂ້າສັດຖວາຍບູຊາ ໝໍ້ສຳລັບເຄື່ອງຫອມເຜົາບູຊາ ແລະເຄື່ອງທອງສຳ-
ລິດທັງໝົດທີ່ໃຊ້ໃນພິທີການຂອງພຣະວິຫານ. 15ພວກເຂົາໄດ້ຂົນເອົາທຸກສິ່ງທີ່ເຮັດດ້ວຍຄຳ ຫລື
ເງິນໄປ ຄືໝໍ້ນ້ອຍ ແລະອ່າງໃສ່ຖ່ານຫີນ. 16ເຄື່ອງທອງສຳລິດທີ່ກະສັດໂຊໂລໂມນເຮັດໄວ້ໃນ
ພຣະວິຫານຄື ເສົາສອງເສົາ ຕີນເສົາ ອ່າງໃຫຍ່ໃສ່ນ້ຳ ເຄື່ອງໃຊ້ເຫລົ່ານີ້ໜັກຫລາຍຈົນຊັ່ງບໍ່
ໄດ້. 17ເສົາສອງເສົານັ້ນ ແຕ່ລະເສົາສູງແປດສິບສອກ ຢູ່ເທິງເສົາມີບົວທອງສຳລິດ ບົວແຕ່ລະ
ດອກສູງສາມສອກ ມີຮູບພວງມາລາ ແລະຮູບໝາກພິລາອ້ອມຮອບບົວນັ້ນ.

18ເນບູຊາຣາດານ ຜູ້ບັນຊາການທະຫານໄດ້ຈັບມະຫາປະໂລຫິດເສຣາຢາ ແລະປະໂລຫິດ
ເຊຟານີຢາ ຜູ້ຮອງ ພ້ອມທັງຜູ້ມີໜ້າທີ່ດູແລພຣະວິຫານສາມຄົນໄປນຳ. 19ພາຍໃນເມືອງເພິ່ນ
ໄດ້ຈັບຜູ້ບັນຊາການທະຫານ ທີ່ປຶກສາພະມະຫາກະສັດຫ້າຄົນ ຮອງຜູ້ບັນຊາການທະຫານ ຜູ້
ຮັບຜິດຊອບທະບຽນພົນ ແລະຄົນສຳຄັນຄົນອື່ນໆ ອີກຫ້າສິບຄົນທີ່ຍັງຢູ່ໃນເມືອງ. 20ເນບູຊາ-
ຣາດານ ໄດ້ຈັບເອົາພວກເຫລົ່ານີ້ໄປຫາເຈົ້າຊີວິດປະເທດບາບີໂລນທີ່ຣິບລາໃນເຂດແດນ ຮາ-
ມັດ. 21ຢູ່ທີ່ນັ້ນ ເຈົ້າຊີວິດໄດ້ທໍລະມານ ແລະໄດ້ຂ້າພວກເຂົາເສຍ. ດັ່ງນັ້ນແຫລະ ຊາວຢູດາ
ຈຶ່ງຖືກເນລະເທດອອກຈາກປະເທດຂອງຕົນ.

## ເກດາລີຢາຮັບຕຳແໜ່ງເປັນຜູ້ປົກຄອງຢູດາ

[22]ເຈົ້າ ເນບູກາດເນັດຊາ ເຈົ້າຊີວິດປະເທດ ບາບີໂລນ ໄດ້ແຕ່ງຕັ້ງ ເກດາລີຢາ ລູກຊາຍຂອງ
ອາຮີການ ຫລານຊາຍຂອງຊາຟານ ເປັນຜູ້ປົກຄອງປະເທດຢູດາ ແລະໃຫ້ເປັນຜູ້ຮັບຜິດຊອບ
ທຸກຄົນທີ່ບໍ່ໄດ້ຖືກຈັບໄປກຸງ ບາບີໂລນ. [23]ເມື່ອພວກນາຍ ແລະພົນທະຫານ ທີ່ຢູ່ໃນ ແລະນອກ
ເມືອງໄດ້ຍິນວ່າ ເຈົ້າຊີວິດປະເທດ ບາບີໂລນ ໄດ້ແຕ່ງຕັ້ງ ເກດາລີຢາ ເປັນຜູ້ປົກຄອງ ພວກເຂົາກໍ
ພາກັນໄປຫາ ເກດາລີຢາ ທີ່ເມືອງ ມິດຊະປາ ພວກນາຍທະຫານເຫລົ່ານີ້ມີຄື ອິດຊະມາເອນ
ລູກຊາຍຂອງ ເນທານີອາ ໂຢຮານານ ລູກຊາຍຂອງ ກາເຣອາ ເສຣາຢາ ລູກຊາຍຂອງຕັນ-
ຮູເມັດ ຊຶ່ງເປັນຊາວເມືອງ ເນໂຕຟາ ຢາອາຊານີຢາ ຊຶ່ງເປັນຊາວເມືອງ ມາອາກາ. [24]ສ່ວນ
ເກດາລີຢາ ກໍເວົ້າຕໍ່ພວກເຫລົ່ານີ້ວ່າ, “ພວກເຈົ້າບໍ່ຕ້ອງຢ້ານຊາວ ບາບີໂລນ ດອກ ຈົ່ງຢູ່ໃນປະ-
ເທດນີ້ ແລະຮັບໃຊ້ເຈົ້າຊີວິດ ບາບີໂລນ ແລ້ວພວກທ່ານຈະມີຄວາມສຸກ.” [25]ແຕ່ວ່າໃນເດືອນທີ່
ເຈັດຂອງປີນັ້ນ ອິດຊະມາເອນ ລູກຊາຍ ເນທານີອາ ຫລານ ເອລີຊາມາ ຜູ້ເປັນເຊື້ອສາຍຂອງ
ກະສັດພ້ອມທັງທະຫານສິບຄົນ ໄດ້ເຂົ້າມາຂ້າ ເກດາລີຢາ ພ້ອມທັງຊາວ ອິສຣາເອນ ແລະຊາວ
ບາບີໂລນ ທີ່ຢູ່ນຳເພິ່ນໃນ ເມືອງ ມິດຊະປາ ນັ້ນ. [26]ແລ້ວປະຊາຊົນ ອິສຣາເອນ ທັງໝົດ ທັງຄົນ
ຮັ່ງມີ ແລະຄົນຈົນ ພ້ອມທັງພວກນາຍທະຫານກໍພາກັນປົບໜີໄປຍັງປະເທດ ເອຢິບ ເພາະຢ້ານ
ຊາວ ບາບີໂລນ.

## ເຈົ້າເຢໂຮຍາກິນໄດ້ຮັບອະໄພໂທດ

[27]ໃນປີທີສາມສິບເຈັດ ທີ່ເຈົ້າ ເຢໂຮຍາກິນ ເຈົ້າຊີວິດຢູດາຕົກເປັນຊະເລີຍ ເປັນປີທີ່ ເອວິນ-
ເມໂຣດັກ ຂຶ້ນເປັນເຈົ້າຊີວິດ ພະອົງໄດ້ໃຫ້ອະໄພໂທດແກ່ ເຢໂຮຍາກິນ ເຈົ້າຊີວິດຢູດາ ແລະ
ໄດ້ປ່ອຍພະອົງອອກຈາກຄຸກ ໃນວັນທີຊາວເຈັດຂອງເດືອນສິບສອງ. [28]ເຈົ້າ ເອວິນ-ເມໂຣດັກ
ໄດ້ລ້ຽງດູພະອົງຢ່າງມີເມດຕາຈິດ ທັງໄດ້ອະນຸຍາດໃຫ້ມີກຽດກວ່າເຈົ້າຊີວິດອົງອື່ນໆ ທີ່ຖືກຈັບ
ມາຢູ່ກຸງ ບາບີໂລນ. [29]ດັ່ງນັ້ນ ເຈົ້າ ເຢໂຮຍາກິນ ຈຶ່ງໄດ້ຮັບອະນຸຍາດໃຫ້ຖອດເຄື່ອງນຸ່ງນັກໂທດ
ອອກ ແລະໄດ້ຮັບປະທານອາຫານຮ່ວມໂຕະກັບເຈົ້າຊີວິດຕະຫລອດມາ. [30]ເຈົ້າຊີວິດເປັນຜູ້ອຸບ-
ປະຖຳ ແລະຮັບຜິດຊອບຈົນຊົ່ວຊີວິດຂອງເພິ່ນ.

* * *

# ຂ່າວຄາວ ສະບັບຕົ້ນ

## ບົດທີ 1

### ຕັ້ງແຕ່ອາດາມເຖິງໂນອາ

1ອາດາມ ເຊດ ເອໂນດ 2ເກນານ ມາຮາລາເລນ ຢາເຣັດ 3ເອໂນກ ເມທູເຊລາ ລາເມັກ
4ໂນອາ ເຊມ ຮາມ ຢາເຟດ

### ລູກຊາຍທັງຫລາຍຂອງຢາເຟດ

5ລູກຊາຍທັງຫລາຍຂອງຢາເຟດ ຄື ໂກເມ, ມາໂຄກ, ມາດາຍ, ຢາວານ, ຕູບານ, ເມ-
ເຊັກ ແລະຕີຣາດ

6ລູກຊາຍທັງຫລາຍຂອງໂກເມ ຄື ອັດຊະເກນາດ, ຣີຟາດ ແລະໂຕກາມາ

7ລູກຊາຍທັງຫລາຍຂອງຢາວານ ຄື ເອລີຊາ, ຕາຊິດ, ກິດຕີມ ແລະໂດດານີມ

### ເຊື້ອສາຍຂອງຮາມ

8ລູກຊາຍທັງຫລາຍຂອງຮາມ ຄື ກູເຊ, ມິດຊະຣາຢີມ, ພຸດ ແລະການາອານ

9ລູກຊາຍທັງຫລາຍຂອງກູເຊ ຄື ເສບາ, ຮາວິລາ, ສັບຕາ, ຣາອາມາ ແລະສັບເຕກາ.
ລູກຊາຍຂອງຣາອາມາ ຄື ເຊບາ ແລະເດດານ

10ກູເຊເປັນບິດາຂອງນິມໂຣດ, ຜູ້ນີ້ເປັນຜູ້ທຳອິດທີ່ເກັ່ງກ້າເທິງແຜ່ນດິນໂລກ

11ມິດຊະຣາຢີມເປັນບິດາຂອງ ລູດີ ແລະພວກອານາມີມ, ພວກເລຮາບີມ, ພວກນັບຕູຮີມ.
12ພວກປັດຣູສີ ກັບພວກກັດສະລູຮີມ (ພວກຟີລິດສະຕິນໄດ້ເກີດອອກມາຈາກພວກນີ້) ແລະ
ພວກກັບໂຕຣີ)

13ການາອານເປັນບິດາຂອງຊີໂດນລູກຫົວປີ ແລະເຮດ 14ແລະຄົນເຢບຸດ, ຄົນອະໂມຣິດ,
ຄົນກີກາຊີ 15ຄົນຮີວີ, ຄົນອາກີ, ຄົນສີນີ 16ຄົນອາວາດ, ຄົນເຊມາ ແລະຄົນຮາມັດ

### ລູກຊາຍທັງຫລາຍຂອງເຊມ

17ລູກຊາຍທັງຫລາຍຂອງເຊມ ຄື ເອລາມ, ອັດຊີເຣຍ, ອາປັກຊາດ, ລູດ, ອາຣາມ, ອູເຊ,
ຮຸນ, ເກເທແລະເມເຊັກ

18ອາປັກຊາດເປັນບິດາຂອງເຊລາ ແລະເຊລາເປັນບິດາຂອງເຮເບ 19ເຮເບມີລູກຊາຍສອງ
ຄົນ ຄົນໜຶ່ງຊື່ເປເລັກ ເພາະໃນສະໄໝຂອງເພິ່ນແຜ່ນດິນຖືກແບ່ງປັນກັນ ແລະນ້ອງຊາຍຂອງ
ລາວຊື່ໂຢກຕານ

20ໂຢກຕານເປັນບິດາຂອງອານໂມດາດ 21ເຊເລັບ, ຮາຊາມາເວດ, ເຢຣາ ແລະຮາໂດຣາມ
22ອູຊານ, ດິກລາ, ເອບານ, ອາບີມາເອນ, ເຊບາ ແລະ ໂອຟີ 23ຮາວິລາ ແລະໂຢບັບ ຄົນ
ເຫລົ່ານີ້ເປັນລູກຊາຍທັງຫລາຍຂອງໂຢກຕານ

## ຕັ້ງແຕ່ເຊມຮອດອັບຣາຮາມ

24ເຊມ, ອາປັກຊາດ, ເຊລາ 25ເຮເບ, ເປເລັກ, ເຣອູ 26ເສຣຸກ, ນາໂຮ, ເຕຣາ 27ອັບຣາມ
ຜູ້ເປັນອັບຣາຮາມ

28ລູກຊາຍຂອງອັບຣາຮາມ ຊື່ ອີຊາກ ແລະອິດຊະມາເອນ

## ລູກຊາຍທັງຫລາຍຂອງອິດຊະມາເອນ

29ຕໍ່ໄປນີ້ເປັນເຊື້ອສາຍຂອງອິດຊະມາເອນ ລູກຫົວປີຂອງອິດຊະມາເອນ ຄື ເນບາໂຢດ
ແລະເກດາ ອັດເບເອນ ມິບສາມ 30ມິຊະມາ, ດູມາ, ມັດສາ, ຮາດັດ ແລະເຕມາ 31ເຢຕູເຣ,
ນາຟິດ ແລະເກເດມາ ຄົນເຫລົ່ານີ້ເປັນລູກຊາຍຂອງອິດຊະມາເອນ

## ລູກຊາຍທັງຫລາຍຂອງນາງເກຕູຣາ

32ລູກຊາຍທັງຫລາຍຂອງນາງເກຕູຣາເມຍນ້ອຍຂອງອັບຣາຮາມ ນາງໃຫ້ກຳເນີດລູກຊື່ ຊີ-
ມຣານ, ໂຢກຊານ ເມດານ, ມີດີອານ, ອີຊະບາກ ແລະຊູອາ ແລະລູກຊາຍຂອງໂອຊານ ຊື່
ເຊບາ ແລະເດດານ

33ລູກຊາຍຂອງມີດີອານ ຄື ເອຟາ, ເອເຟ, ຮາໂນກ, ອາບີດາ ແລະເອັນດາອາ ທັງໝົດ
ນີ້ເປັນລູກຫລານຂອງນາງເກຕູຣາ

## ລູກຊາຍທັງຫລາຍຂອງອັບຣາຮາມກັບອີຊາກ

34ອັບຣາຮາມເປັນບິດາຂອງອີຊາກ ລູກຊາຍຂອງອີຊາກ ຊື່ ເອຊາວ ແລະ ອິສຣາເອນ
(ຢາໂຄບ)

## ລູກຊາຍທັງຫລາຍຂອງເອຊາວ

35ລູກຊາຍຂອງເອຊາວ ຊື່ ເອລີຟັດ, ເຣອູເອນ, ເຢອຸດ, ຢາລາມ ແລະໂກຣາ

36ລູກຊາຍຂອງເອລີຟັດ ຊື່ ເຕມານ, ໂອມາ, ເຊຟີ, ກາຕາມ, ເກນັດ ຕິມນາ ແລະອຳ
ອາເລັກ

37ລູກຊາຍຂອງເຣອູເອນ ຊື່ ນາຮາດ, ເຊຣາ, ຊາມມາ ແລະມິດຊາ

38ລູກຊາຍຂອງເສອີ ຊື່ ໂລຕັນ, ໂຊບານ, ຊີເບໂອນ, ອານາ, ດີໂຊນ, ເອເຊ ແລະດີຊານ

39ລູກຊາຍຂອງໂລຕັນ ຊື່ ໂຮຣີ ແລະໂຮມາມ ແລະນ້ອງສາວຂອງໂລຕັນຊື່ຕິມນາ

40ລູກຊາຍຂອງໂຊບານ ຊື່ ອາລີອານ, ມານາຮາດ, ເອບານ, ເຊຟີ ແລະໂອນາມ ແລະ
ລູກຊາຍຂອງຊີເບໂອນ ຊື່ ອາອີຢາ ແລະອານາ

41ລູກຊາຍຂອງອານາ ຊື່ ດີໂຊນ, ລູກຊາຍຂອງດີໂຊນ ຊື່ ຮຳຣານ, ເອຊະບານ, ອິດຣັນ
ແລະເກຣານ

42ລູກຊາຍຂອງເອເຊ ຊື່ ບິນຮານ, ຊາອາວານ ແລະຢາອາການ ລູກຊາຍຂອງດີຊານ ຊື່
ອູເຊ ແລະອາຣານ

## ບັນດາກະສັດແຫ່ງແຜ່ນດິນເອໂດມ[ກ]

[43]ຕໍ່ໄປນີ້ແມ່ນກະສັດຜູ້ທີ່ປົກຄອງຢູ່ໃນແຜ່ນດິນ ເອໂດມ ກ່ອນທີ່ຈະມີກະສັດປົກຄອງຄົນ ອິ-
ສຣາເອນ ຄື ເບລາລູກຊາຍຂອງ ເບໂອ ເມືອງຫລວງຂອງເພິ່ນຊື່ດິນຮາບາ
[44]ເມື່ອ ເບລາ ເສຍຊີວິດແລ້ວ ໂຢບັບ ລູກຊາຍ ເຊຣາ ຊາວເມືອງ ໂບຊະຣາກໍຂຶ້ນປົກຄອງແທນ
[45]ເມື່ອ ໂຢບັບ ເສຍຊີວິດ ຮູຊາມ ຊາວເມືອງ ເຕມານກໍຂຶ້ນປົກຄອງແທນ
[46]ເມື່ອ ຮູຊາມ ເສຍຊີວິດ ຮາດັດ ລູກຊາຍຂອງ ເບດັດ ຜູ້ທີ່ສູ້ຮົບຊະນະຄົນ ມີດີອານ ໃນທົ່ງນາ
ຂອງ ໂມອາບ ກໍຂຶ້ນປົກຄອງແທນໃນເມືອງຫລວງຂອງເພິ່ນຊື່ ອາວິດ
[47]ເມື່ອ ຮາດັດ ເສຍຊີວິດ ສາມລາ ຊາວເມືອງ ມາຊະເຣກາກໍຂຶ້ນປົກຄອງແທນ
[48]ເມື່ອ ສາມລາ ເສຍຊີວິດ ຊາອູນ ຊາວເມືອງ ເຣໂຮໂບດ ທີ່ຢູ່ແຄມແມ່ນ້ຳ ເອຟຣາດ ກໍຂຶ້ນປົກ-
ຄອງແທນ
[49]ເມື່ອຊາອູນ ເສຍຊີວິດ ບາອານ-ຮານານ ລູກຊາຍຂອງ ອັກໂບກໍຂຶ້ນປົກຄອງແທນ
[50]ເມື່ອ ບາອານ-ຮານານ ເສຍຊີວິດ ຮາດັດ ກໍຂຶ້ນປົກຄອງ ແທນ, ເມືອງຫລວງຂອງ ເພິ່ນຊື່
ປາອູ ແລະມະເຫສີຂອງ ເພິ່ນຊື່ ເມເຮຕາເບນ ຊຶ່ງເປັນລູກສາວຂອງນາງ ມາດເຣັດ ລູກຂອງ
ເມຊາຮາບ

## ບັນດາເຈົ້ານາຍທັງຫລາຍຂອງເອໂດມ

[51]ແລະ ຮາດັດກໍເສຍຊີວິດ, ພວກເຈົ້ານາຍຂອງ ເອໂດມມີ ຄື ເຈົ້າຕິມນາ ເຈົ້າອັນວາ ເຈົ້າ
ເຢເທັດ [52]ເຈົ້າ ໂອໂຮລິບາມາ ເຈົ້າ ເອລາ ເຈົ້າປີໂນນ [53]ເຈົ້າ ເກນັດ ເຈົ້າ ເຕມານ ເຈົ້າ ມິບຊາ
[54]ເຈົ້າ ມັກດີເອນ ແລະເຈົ້າ ອີຣາມ ຄົນເຫລົ່ານີ້ແມ່ນພວກເຈົ້ານາຍຂອງ ເອໂດມ

# ບົດທີ 2

## ບັນດາລູກຊາຍທັງຫລາຍຂອງອິສຣາເອນ

[1]ຕໍ່ໄປນີ້ເປັນລູກຊາຍຂອງ ອິສຣາເອນ ຄື ຣູເບັນ, ຊີເມໂອນ, ເລວີ, ຢູດາ, ອິດຊາຄາ, ເຊ-
ບູລູນ
[2]ດານ, ໂຢເຊັບ, ເບັນຢາມິນ, ນັບທາລີ, ຄາດ ແລະ ອາເຊ

## ບັນດາລູກຊາຍຂອງຢູດາ

[3]ລູກຊາຍຂອງ ຢູດາຊື່ ເອຣະ, ໂອນານ ແລະ ເຊລາ ທັງສາມຄົນນີ້ເກີດຈາກລູກສາວຂອງ
ບັດຊູອາ ຄົນ ການາອານ ຝ່າຍ ເອຣະລູກຊາຍກົກຂອງ ຢູດານັ້ນເປັນຄົນຊົ່ວຮ້າຍຕໍ່ສາຍພຣະ-
ເນດຂອງ ພຣະຜູ້ເປັນເຈົ້າ ແລະພຣະອົງໄດ້ປະຫານຊີວິດລາວເສຍ
[4]ຕາມາ ລູກໄພ້ຂອງ ຢູດາ ໄດ້ກຳເນີດ ເປເຣັດ ແລະ ເຊຣາ ໃຫ້ເພິ່ນ ລູກຊາຍທັງໝົດຂອງ ຢູດາ
ມີຫ້າຄົນ
[5]ລູກຊາຍຂອງ ເປເຣັດຊື່ ເຮດຊະໂຣນ, ຮາມູນ
[6]ລູກຊາຍຂອງ ເຊຣາຄື ຊິມຣີ, ເອທານ, ເຮມານ, ການໂກນ ແລະ ດາຣາ ທັງໝົດມີຫ້າຄົນ

[ກ]ປະຖົມມະການ 36:1-43

7ລູກຊາຍຂອງອາການີຊື່ວ່າ ອາຄານ ຜູ້ນຳຄວາມເດືອດຮ້ອນມາໃຫ້ແກ່ອິສຣາເອນ ແລະ
ໄດ້ເຮັດບາບໃນເລື່ອງສິ່ງຂອງທີ່ຖືກສາບແຊ່ງນັ້ນ

8ແລະລູກຊາຍຂອງ ເອທານ ຊື່ ອາຊາຣີຢາ

9ລູກຊາຍຂອງ ເຮດຊະໂຣນ ຊຶ່ງເກີດແກ່ເພິ່ນນັ້ນຄື ເຢຣາເມເອນ, ລາມ ແລະ ກາເລັບ

10ລາມ ເປັນບິດາຂອງ ອຳມີນາດາບ ແລະ ອຳມີນາດາບ ເປັນບິດາຂອງ ນາໂຊນ ເຈົ້ານາຍໃນ
ລູກຫລານ ຂອງ ຢູດາ 11ນາໂຊນ ເປັນບິດາຂອງ ຊັນໂມນ, ຊັນໂມນ ເປັນບິດາຂອງ ໂບອາດ
12ໂບອາດ ເປັນບິດາ ໂອເບັດ, ໂອເບັດ ເປັນບິດາ ເຢຊີ

## ເຊື້ອສາຍຂອງເຢຊີ

13ເຢຊີ ເປັນບິດາຂອງ ເອລີອາບ ລູກຫົວປີຂອງເພິ່ນ ອາບີນາດາບຜູ້ທີສອງ ແລະຊີເມອາຜູ້ທີ
ສາມ 14ເນທາເນນຜູ້ທີສີ່ ແລະ ຣັດດາຍຜູ້ທີຫ້າ 15ໂອເຊມຜູ້ທີຫົກ ດາວິດຜູ້ທີເຈັດ 16ແລະ
ເອື້ອຍຂອງລາວຄື ເຊຣູຢາ ແລະອາບີກາຍ ແລະລູກຊາຍຂອງນາງ ເຊຣູຢາຊື່ ອາບີຊາຍ ໂຢ-
ອາບ ແລະອາສາເຮນ ສາມຄົນນຳກັນ 17ອາບີກາຍ ເປັນບິດາອາມາສາ ແລະພໍ່ຂອງອາມາ-
ສາຊື່ ເຢເທຄົນ ອິດຊະມາເອນ

## ເຊື້ອສາຍຂອງກາເລັບ

18ກາເລັບ ລູກຊາຍ ເຮດຊະໂຣນ ໄດ້ລູກກັບ ອາຊູບາ ເມຍຂອງຕົນ ແລະນາງ ເຢຣີໂອດ ທີ່ມີລູກ
ຊາຍຊື່ ເຢເຊ, ໂຊບາບ ແລະອາໂດນ 19ເມື່ອອາຊູບາ ເສຍຊີວິດ ກາເລັບກໍແຕ່ງງານກັບ ເອ-
ຟຣາທາ ແລະໄດ້ລູກຊື່ຮູເຣ ໃຫ້ແກ່ເພິ່ນ 20ຮູເຣ ເປັນບິດາຂອງ ອູຣີ, ອູຣີ ເປັນບິດາຂອງ ເບຊາ-
ເລນ

21ພາຍຫລັງທີ່ ເຮດຊະໂຣນ ໄດ້ເຂົ້າໄປຫາລູກສາວຂອງ ມາກີ ພໍ່ຂອງ ກີເລອາດ ແລະໄດ້ແຕ່ງ-
ງານ ເມື່ອເພິ່ນມີອາຍຸຫົກສິບປີ ແລະນາງໄດ້ກຳເນີດລູກໃຫ້ເພິ່ນຊື່ ເສກຸບ 22ແລະ ເສກຸບ ເປັນ
ບິດາຂອງ ຢາອີ ຜູ້ມີຫົວເມືອງຊາວສາມຫົວເມືອງ ໃນ ແຜ່ນດິນ ກີເລອາດ 23ພວກ ເກຊູ ກັບພວກ
ອາຣາມ ໄດ້ຍຶດ ເອົາຫົວ ເມືອງຕ່າງໆຂອງ ຢາອີ ແລະຫົວ ເມືອງ ເກນາດ ກັບບັນດາຊົນນະບົດ
ຂອງຫົວເມືອງ ເຫລົ່ານັ້ນຫົກສິບຊົນນະບົດດ້ວຍກັນ ຄົນເຫລົ່ານີ້ເປັນລູກຫລານຂອງ ມາກີ ພໍ່ຂອງ
ກີເລອາດ

24ພາຍຫລັງ ເຮດຊະໂຣນ ເສຍຊີວິດ ໃນ ກາເລັບ ເອຟຣາທາ, ອາບີຢາ ເມຍຂອງ ເພິ່ນຍັງໄດ້
ເກີດລູກໃຫ້ແກ່ທ່ານ ຊື່ອາຊະຮູຜູ້ເປັນພໍ່ຂອງ ເຕໂກອາ

## ເຊື້ອສາຍຂອງເຢຣາເມເອນ

25ບັນດາລູກຊາຍຂອງ ເຢຣາເມເອນ ລູກຫົວປີຂອງ ເຮດຊະໂຣນ ຄື ຣາມ ເປັນລູກຫົວປີຂອງ
ເພິ່ນ, ບູນາ, ໂອເຣັນ ໂອເຊມ ແລະອາຮີຢາກຳເນີດຈາກນາງອາບີຢາ 26ເຢຣາເມເອນ ມີເມຍ
ອີກຄົນໜຶ່ງຊື່ອາຕາຣາ ນາງເປັນແມ່ຂອງ ໂອນາມ

27ລູກຊາຍຂອງລາມ ລູກຫົວປີຂອງ ເຢຣາເມເອນຊື່ ມາອາດ, ຢາມິນ ແລະ ເອເກ

28ລູກຊາຍຂອງ ໂອນາມ ຊື່ວ່າ ຊາມມາຍ ແລະຢາດາ; ລູກຊາຍຂອງຊາມມາຍຊື່ ນາດາບ
ແລະອາບີຊູ

29ເມຍຂອງ ອາບີຊູຊື່ອາບີຮາຍ ແລະນາງໄດ້ເກີດ ອາຣະບານ ແລະ ໂມລິດ ໃຫ້ແກ່ເພິ່ນ
30ລູກຊາຍຂອງ ນາດາບຊື່ ເສເລັດ ແລະອັບປາຢິມ ແຕ່ ເສເລັດ ໄດ້ຕາຍໄປເມື່ອຍັງບໍ່ມີລູກ
31ລູກຊາຍຂອງ ອັບປາຢິມ ຊື່ ອີຊີ; ລູກຊາຍຂອງ ອີຊີຊື່ ເຊຊານ; ລູກຊາຍຂອງ ເຊຊານ ຊື່
ອາຣະລາຍ
32ລູກຊາຍຂອງ ຢາດາ ນ້ອງຊາຍຂອງ ຊາມມາຍ ຊື່ວ່າ ເຢເທ ແລະ ໂຢນາທານ ແລະ ເຢເທ
ໄດ້ຕາຍໄປເມື່ອຍັງບໍ່ມີລູກ
33ລູກຊາຍຂອງ ໂຢນາທານ ຊື່ ເປເລດ ແລະ ຊາຊາ ຄົນເຫລົ່ານີ້ເປັນລູກຫລານຂອງ ເຢຣາ-
ເມເອນ

## ເຊື້ອສາຍຂອງເຊຊານ

34ຝ່າຍ ເຊຊານ ບໍ່ມີລູກຊາຍມີແຕ່ລູກສາວ ແຕ່ ເຊຊານ ມີຂ້າໃຊ້ຊາວ ເອຢິບ ຢູ່ຄົນໜຶ່ງຊື່ ຢາ-
ຣະຮາ 35ເຊຊານ ໄດ້ຍົກລູກສາວຂອງຕົນໃຫ້ເປັນເມຍຂອງ ຢາຣະຮາ ຂ້າໃຊ້ຂອງຕົນນັ້ນ ແລະ
ນາງກໍເກີດລູກໃຫ້ລາວຊື່ ອາດຕາຍ
36ອາດຕາຍ ເປັນບິດາຂອງ ນາທານ ແລະ ນາທານ ເປັນບິດາຂອງ ຊາບາດ 37ຊາບາດ ເປັນ
ບິດາຂອງ ເອຟະລານ ແລະ ເອຟະລານ ເປັນບິດາຂອງ ໂອເບັດ 38ໂອເບັດ ເປັນບິດາຂອງ ເຢຮູ
ເຢຮູ ເປັນບິດາຂອງ ອາຊາຣີຢາ 39ອາຊາຣີຢາ ເປັນບິດາຂອງ ເຮເລັດ ແລະ ເຮເລັດ ເປັນບິດາ
ຂອງ ເອເລອາສາ 40ເອເລອາສາ ເປັນບິດາຂອງ ສິສະມາຍ ແລະ ສິສະມາຍ ເປັນບິດາ ຊານລູມ
41ຊານລູມ ເປັນບິດາ ເຢການີຢາ ແລະ ເຢການີຢາ ເປັນບິດາ ເອລີຊາມາ

## ເຊື້ອສາຍຂອງເຢຣາເມເອນ ແລະກາເລັບ

42ລູກຊາຍຂອງ ກາເລັບ ນ້ອງຊາຍຂອງ ເຢຣາເມເອນ ຊື່ ເມຊາ ລູກຫົວປີຂອງ ເພິ່ນຜູ້ຊຶ່ງເປັນພໍ່
ຂອງຊີເຟ ແລະລູກຊາຍ ຂອງ ມາເຣຊາ ຜູ້ເປັນພໍ່ຂອງ ເຮັບໂຮນ
43ລູກຊາຍຂອງ ເຮັບໂຮນ ຊື່ ໂກຣາ, ຕັບປົວ, ເຣເກັມ ແລະ ເຊມາ
44ເຊມາ ເປັນບິດາ ຣາຣາມ ຜູ້ຊຶ່ງເປັນບິດາຂອງ ໂຢເກອາມ ແລະ ເຣເກັມ ເປັນບິດາ ຊາມມາຍ
45ລູກຊາຍຂອງ ຊາມມາຍ ຄື ມາໂອນ ແລະ ມາໂອນ ເປັນບິດາຂອງ ເບັດ-ຊູເຣ
46ເອຟາ ເມຍນ້ອຍຂອງ ກາເລັບ ເກີດລູກຊື່ ຮາຣານ, ໂມຊາ ແລະ ກາເຊັດ; ແລະ ຮາຣານ
ເປັນພໍ່ຂອງ ກາເຊັດ
47ລູກຊາຍຂອງ ຢາດາຍ ຊື່ ເຣເກມ, ໂຢທານ, ເກຊານ, ເປເລັດ, ເອຟາ ແລະ ຊາອາບ
48ມາອາກາ ເມຍນ້ອຍຂອງ ກາເລັບ ເກີດລູກຊື່ ເຊເບ ແລະ ຕີຂະນາ 49ນາງເກີດລູກຊື່ ຊາອາບ
ຜູ້ທີ່ເປັນພໍ່ຂອງ ມັດມານນາ, ເຊວາ ຜູ້ເປັນພໍ່ຂອງ ມັກເບນາ ແລະພໍ່ຂອງ ກິເບອາ ດ້ວຍແລະລູກ
ສາວຂອງ ກາເລັບ ຊື່ ອັກສາ

## ຕັ້ງແຕ່ກາເລັບລູກຮູເລ

50ລູກຫລານຂອງ ກາເລັບ ລູກຊາຍຂອງ ຮູເຣ ລູກຫົວປີຂອງ ເອຟຣາທາ ຊື່ ໂຊບານ ພໍ່ຂອງ
ກີຣີຢາດ-ເຢອາຣິມ 51ສານມາ ບິດາຂອງ ເບັດເລເຮັມ ແລະ ຮາເຣັບ ບິດາຂອງ ເບັດ-ກາເດ
52ໂຊບານ ບິດາຂອງ ກີຣີຢາດ-ເຢອາຣິມ ມີລູກຊາຍອີກຊື່ ຮາໂຣເອ ແລະ ເຄິ່ງໜຶ່ງຂອງຄົນ

ເມນູໂຮດ 53ແລະບັນດາຄອບຄົວຂອງກີຣີຢາດ-ເຢອາຣິມ ແມ່ນພວກ ຄອບຄົວອິດຣີ, ຄອບຄົວ
ປູທີ, ຄອບຄົວຊູມາ ຄອບຄົວມິດຊະຣາ, ຊາວໂຊຣາດ ແລະຊາວເອຊະຕາໂອນກໍໄດ້ບັງເກີດ
ມາຈາກຄົນເຫລົ່ານີ້

54ລູກຊາຍຂອງ ຊັນໂມນ ຊື່ວ່າ ເບັດເລເຮັມ, ຊາວ ເນໂຕຟາ, ອັດຕະໂຣດ-ເບັດ-ໂຢອາບ
ແລະເຄິ່ງໜຶ່ງຂອງຄົນ ມານາຮາດຜູ້ເປັນຊາວໂຊຣີ 55ທັງຄອບຄົວຂອງອາລັກຊື່ງຢູ່ ເມືອງຢາ-
ເບດຄື ຄອບຄົວຕີຣາດ, ຄອບຄົວຊີເມອາ ແລະຄອບຄົວສູກາ ພວກເຫລົ່ານີ້ ເປັນຄົນເກນີທີ່
ໄດ້ເກີດມາຈາກຮໍາມາດບິດາຂອງຄອບຄົວເຣກາບ

# ບົດທີ 3

## ເຊື້ອສາຍຂອງດາວິດ[ກ]

1ຕໍ່ໄປນີ້ເປັນລູກຊາຍຂອງ ດາວິດທີ່ເກີດໃຫ້ແກ່ເພິ່ນໃນເມືອງ ເຮັບໂຣນ, ລູກຊາຍຫົວປີ ແມ່ນ
ອຳໂນນ ລູກຂອງນາງ ອາຮີໂນອາມ ຊາວ ເຢດຊະເຣເອນ; ຜູ້ທີສອງຄື ດານີເອນ ເກີດຈາກນາງ
ອາບີກາຍ ຊາວ ກາເມນ

2ຜູ້ທີສາມຄື ອັບຊາໂລມ ລູກຊາຍຂອງນາງ ມາອາກາ ລູກສາວຂອງ ຕານມາຍ ກະສັດເມືອງ
ເກຊູ; ຜູ້ທີສີ່ຄື ອາໂດນີຢາ ລູກຊາຍຂອງຮັກກີດ

3ຜູ້ທີຫ້າຄື ເຊຟາຕີຢາ ລູກຂອງນາງ ອາບີຕານ; ຜູ້ທີຫົກຄື ອິດເຣອາມ ກໍາເນີດຈາກນາງ
ເອັກລາ ເມຍຂອງເພິ່ນ

4ທັງຫົກເກີດໃຫ້ແກ່ດາວິດ ໃນເມືອງ ເຮັບໂຣນ; ໃນບ່ອນນັ້ນເພິ່ນໄດ້ປົກຄອງເປັນເວລາເຈັດປີ
ກັບຫົກເດືອນ ແລະໄດ້ປົກຄອງໃນເມືອງ ເຢຣູຊາເລັມ ລະຫວ່າງສາມສິບສາມປີ 5ຕໍ່ໄປນີ້ແມ່ນ
ພວກລູກຊາຍທີ່ໄດ້ເກີດໃຫ້ແກ່ເພິ່ນໃນກຸງ ເຢຣູຊາເລັມ ຄື ຊີເມອາ, ໂຊບາບ, ນາທານ ແລະ
ໂຊໂລໂມນ ສີ່ຄົນນີ້ເກີດຈາກນາງ ບັດເຊບາ ລູກສາວຂອງ ອຳມີເອນ

6ແລ້ວກໍມີ ອິບຮາ, ເອລີຊາມາ, ເອລີເຟເລັດ ແລະ ໂນຄາ 7ເນເຟັກ, ຢາເຟຍ ແລະ ເອລີ-
ຊາມາ 8ເອລີອາດາ ແລະ ເອລີເຟເລັດ ເກົ້າຄົນດ້ວຍກັນ

9ທັງໝົດນີ້ເປັນລູກຊາຍຂອງ ດາວິດ ນອກຈາກລູກຊາຍຂອງນາງສະໜົມ ແລະ ຕາມາ ເປັນ
ນ້ອງສາວຂອງພວກລາວ

## ເຊື້ອສາຍຂອງດາວິດຈົນເຖິງເຊເດກີຢາ

10ລູກຊາຍຂອງ ໂຊໂລໂມນຊື່ ເຣໂຮໂບອາມ ລູກຊາຍຂອງ ເຣໂຮໂບອາມຄື ອາບີຢາ ລູກຊາຍ
ຂອງ ອາບີຢາຄືອາຊາ, ລູກຊາຍຂອງ ອາຊາຄື ເຢໂຮຊາຟັດ

11ລູກຊາຍຂອງ ເຢໂຮຊາຟັດຄື ໂຢຣາມ, ລູກຂອງ ໂຢຣາມຄື ອາຮາຊີຢາ ລູກຊາຍຂອງອາ-
ຮາຊີຢາຄື ໂຢອາດ

12ລູກຊາຍຂອງ ໂຢອາດຄື ອາມາຊີຢາ, ລູກຊາຍຂອງ ອາມາຊີຢາຄື ອຸດຊີຢາ, ລູກຊາຍ
ຂອງ ອຸດຊີຢາຄື ໂຢທາມ

---

[ກ]2 ຊາມູເອນ 3:25; 5:13-16

[13]ລູກຊາຍຂອງໂຢທາມຄື ອາຮາດ ລູກຊາຍຂອງອາຮາດຄື ເຣເຊກີຢາ ລູກຊາຍຂອງເຣ-
ເຊກີຢາຄື ມານາເຊ

[14]ລູກຊາຍຂອງມານາເຊຄື ອາໂມນ ລູກຊາຍຂອງອາໂມນຄື ໂຢສີຢາ

[15]ລູກຊາຍຂອງໂຢສີຢາຄື ໂຢຮານານລູກຊາຍຫົວປີ ຜູ້ທີສອງຄື ເຢໂຮຢາກີມ ຜູ້ທີສາມຄື
ເຊເດກີຢາ ຜູ້ທີສີ່ຄືໂຢອາຮັດ

[16]ລູກຊາຍຂອງເຢໂຮຢາກີມຄື ເຢໂຮຢາກີນ ລູກຊາຍຂອງເຢໂຮຢາກີນຄື ເຊເດກີຢາ

## ເຊື້ອສາຍຂອງເຢໂຮຢາກີນ

[17]ແລະລູກຊາຍຂອງເຢໂຮຢາກີນຄື ເຊອານຕິເອນລູກຊາຍຂອງເພິ່ນ [18]ແລະມັນຄິຣາມ
ເປດາຢາ ເຊນັດຊາ ເຢການີຢາ ໂຮຊາມາ ເນດາບີຢາ

[19]ແລະລູກຊາຍຂອງເປດາຢາຄື ເຊຣູບາເບນ ແລະຊີເມອີ ແລະລູກຊາຍຂອງເຊຣູບາເບນ
ຄື ເມຊຸນລຳ, ຮານານີຢາ ແລະນ້ອງສາວຂອງລາວຄືເຊໂລມິດ

[20]ຮາຊູບາ ໂອເຮນ ເບເຣກີຢາ ຮາສາດີຢາ ແລະຢູຊັບເຮເຊັດທ້າຄົນດ້ວຍກັນ

[21]ລູກຊາຍຂອງຂອງຮານານີຢາຄື ເປລາຕີຢາ ແລະເຢຊາຢາ, ລູກຫລານຂອງເຣຟາຢາ,
ລູກຫລານຂອງອານານ, ລູກຫລານຂອງໂອບາດີຢາ, ລູກຫລານຂອງເຊການີອາ

[22]ລູກຊາຍຂອງເຊການີອາຊື່ວ່າ ເຊມາຢາ ແລະລູກຊາຍຂອງເຊມາຢາຊື່ວ່າ ຮັດຕຸຊະ ອີ-
ການ ບາຣີຢາ ເນອາຣີຢາ ແລະຊາຟາດ ຫົກຄົນນຳກັນ

[23]ລູກຊາຍຂອງເນອາຣີຢາຊື່ວ່າ ເອລີໂອນາຍ, ຮີຊະກີຢາ ແລະອັດຊະຣີການ ສາມຄົນນຳ
ກັນ

[24]ລູກຊາຍຂອງເອລີໂອນາຍຊື່ວ່າ ໂຮດາວີຢາ, ເອລີຢາຊິບ ເປລາຢາ, ອັກກຸບ, ໂຢຮາ-
ນານ, ເດລາຢາ ແລະອານານີ ມີເຈັດຄົນນຳກັນ.

# ບົດທີ 4

## ເຊື້ອສາຍຂອງຢູດາ

[1]ລູກຊາຍຂອງຢູດາຊື່ວ່າ ເປເຣັດ, ເຮດຊະໂຣນ, ການມີ, ຮູເຣ ແລະໂຊບານ

[2]ເຣອາຢາມີລູກຊາຍຊື່ ຢາຮາດ ແລະຢາຮາດມີລູກຊື່ອາຮຸມາຍ ແລະລາຮາດ ຄົນເຫລົ່ານີ້
ເປັນຄອບຄົວຂອງ ຊາວໂຊຣາດ

[3]ພວກນີ້ແມ່ນເຊື້ອສາຍຂອງພໍ່ ເອຕາມ ຄື ເຢດຊະເຣເອນ, ອີຊະມາ ແລະອິດບັດ ແລະ
ນ້ອງສາວຂອງພວກເຂົາຊື່ຮັດເຊເລເລນໂປນີ

[4]ແລະເປນູເອນຜູ້ເປັນພໍ່ຂອງເກໂດເຣ ແລະເອເຊຜູ້ເປັນພໍ່ຂອງຮູຊາ ຄົນເຫລົ່ານີ້ແມ່ນລູກ
ຊາຍຂອງຮູເຣ ລູກຫົວປີຂອງເອຟຣາທາຜູ້ເປັນພໍ່ຂອງເບັດເລເຮັມ

## ເຊື້ອສາຍຂອງອາຊະຮູ

[5]ອາຊະຮູພໍ່ຂອງເຕໂກອາມີເມຍສອງຄົນຄື ເຮລາແລະນະອາຣາ [6]ນະອາຣາເກີດອາຮູດຊຳ,
ເຮເຟ, ເຕເມນີ ແລະຮາຮັດຊະຕາຣີໃຫ້ແກ່ເພິ່ນ ຄົນເຫລົ່ານີ້ເປັນລູກຊາຍຂອງນະອາຣາ [7]ລູກ

ຊາຍຂອງ ເຣລາຊື່ວ່າ ເຊເຣັດ, ອິດຊະຣາ ແລະ ເອທະນັນ [8]ໂອເຊມີລູກຊາຍຊື່ ອານຸບ, ໂຊເບ-
ບາ ແລະບັນດາຄອບຄົວຂອງ ອາຮາລະເຣນ ຊຶ່ງເປັນລູກຊາຍ ຣາຮຸມ

## ຢາເບດ ແລະຄຳອະທິຖານຂອງເພິ່ນ

[9]ຢາເບດ ເປັນຜູ້ທີ່ມີກຽດກວ່າພີ່ນ້ອງທັງຫລາຍຂອງລາວ ແມ່ຂອງລາວເອີ້ນຊື່ລາວວ່າ ຢາ-
ເບດ, ກ່າວວ່າ “ເພາະຂ້ອຍໄດ້ເກີດລາວດ້ວຍຄວາມເຈັບປວດ” [10]ຢາເບດ ໄດ້ອ້ອນວອນອອກ
ນາມຊື່ ພຣະເຈົ້າ ຂອງ ອິສຣາເອນ ວ່າ “ຂໍພຣະອົງໄດ້ອວຍພຣະພອນ ແດ່ຂ້າພະອົງໃຫ້ບໍລິບູນ
ແລະຂະຫຍາຍ ເຂດແດນຂອງຂ້າພະອົງໃຫ້ກວ້າງອອກໄປ ແລະຂໍພຣະຫັດຂອງພຣະອົງສະຖິດ
ຢູ່ກັບຂ້າພະອົງ ແລະຂໍພຣະອົງໄດ້ຮັກສາຂ້າພະອົງໃຫ້ພົ້ນຈາກຄວາມຊົ່ວຮ້າຍ ເພື່ອບໍ່ໃຫ້ຂ້າ-
ພະອົງມີຄວາມເຈັບປວດ” ແລະ ພຣະເຈົ້າ ໄດ້ປະທານຕາມທີ່ລາວທູນຂໍ

[11]ເກລຸບ ນ້ອງຂອງ ຊູຮາ ເປັນບິດາຂອງ ເມຣີ ຜູ້ເປັນບິດາຂອງ ເອຊະໂຕນ [12]ເອຊະໂຕນ ເປັນ
ບິດາ ເບັດ-ຣາຟາ, ປາເສອາ ແລະ ເຕຮິນນາ ຜູ້ເປັນບິດາຂອງ ອີ-ນາຮາດ ຄົນເຫລົ່ານີ້ແມ່ນ
ພວກຂອງ ເຣກາ

[13]ແລະລູກຊາຍຂອງ ເກນັດ ຊື່ ໂອດນີເອນ, ເສຣາຢາ ແລະລູກຊາຍຂອງ ໂອດນີເອນ ຄື
ຮາທັດ [14]ເມໂອໂນທາຍ ເປັນບິດາຂອງ ໂອຟຣາ ແລະ ເສຣາຢາ ເປັນບິດາ ໂຢອາບ ຜູ້ເປັນບິດາ
ຂອງຜູ້ຊຶ່ງໄດ້ກໍ່ຕັ້ງບ້ານຮ່ອມພູ ຊ່າງສີມື ເພາະພວກເຂົາເປັນຊ່າງສີມື

[15]ລູກຊາຍຂອງ ກາເລັບ ຜູ້ເປັນລູກຊາຍ ເຢຟຸນເນ ຄື ອີຣູ, ເອລາ, ນາອາມ ແລະລູກຊາຍ
ຂອງ ເອລາຄື ເກນັດ

[16]ລູກຊາຍຂອງ ເຢຮັນເລເລນຄື ຊີເຟ, ຊີຟາ, ຕີເຣຍ ແລະ ອາສາເຣນ

[17]ລູກຊາຍຂອງ ເອັດຊະຣາຄື ເຢເທ, ເມເຣດ, ເອເຟ, ຢາໂລນ ແລະເມຍຂອງ ເມເຣດ ໄດ້
ເກີດ ມີຣີອາມ ແລະຊາມມາຍ ແລະອີຊະບາ ຜູ້ເປັນພໍ່ຂອງ ເອຊະເຕໂມອາ [18]ແລະເມຍຂອງເພິ່ນ
ຄົນ ຢູດາ ໄດ້ເກີດ ເຢເຣັດ ພໍ່ຂອງ ເກໂດເຣ ແລະ ເຮເບ ພໍ່ຂອງ ໂສໂກ ແລະ ເຢກູທີເອນ ພໍ່ຂອງຊາ-
ໂນອາ ຄົນເຫລົ່ານີ້ແມ່ນລູກຊາຍຂອງນາງ ບິທີຢາ ລູກສາວຂອງ ຟາຣາໂອ ຜູ້ທີ່ ເມເຣດ ໄດ້ເອົາມາ
ເປັນເມຍ

[19]ລູກ ຊາຍ ເມຍ ຂອງ ເພິ່ນ ຊື່ ໂຮດີຢາ ນ້ອງ ສາວ ຂອງ ນາຮາມ ເປັນ ພໍ່ຂອງ ເກອີລາ ຊາວ ການີ
ແລະ ເອຊະເຕໂມອາ ຜູ້ເປັນຊາວ ມາອາກາ

[20]ລູກຊາຍຂອງຊີໂມນ ຊື່ ອຳໂນນ, ຣິນນາ, ເບັນ-ຮານັນ ແລະ ຕີໂລນ ແລະລູກຊາຍຂອງ
ອີຊີ ມີຊື່ ໂຊເຮດ ແລະ ເບັນ-ໂຊເຮັດ

## ເຊື້ອສາຍຂອງເຊລາ

[21]ລູກຊາຍຂອງ ເຊລາ ຜູ້ເປັນລູກຂອງ ຢູດາ ຊື່ວ່າ ເອຣະ ພໍ່ຂອງ ເລກາ, ລາອາດາ ພໍ່ຂອງ ມາ-
ເຣຊາ ແລະບັນດາຄອບຄົວ ແຫ່ງ ເຊື້ອວົງຂອງພວກເຂົາທີ່ເຮັດຜ້າປ່ານເນື້ອລະອຽດ ແຫ່ງຄອບຄົວ
ເບັດ ອາຊະເບອາ [22]ໂຢກີມ ແລະປະຊາຊົນເມືອງ ໂກເຊບາ, ໂຢອາດ, ສາຣາບ ຜູ້ປົກຄອງ ໃນ
ໃນປະເທດ ໂມອາບ ແລະ ຢາຊູບີເລເຮັມ ນີ້ເປັນເລື່ອງຕັ້ງແຕ່ບູຮານນະການ [23]ຄົນເຫລົ່ານີ້ເປັນ
ຊ່າງປັ້ນໝໍ້ດິນ ພວກເຂົາເປັນຊາວເມືອງ ເນຕາອີມ ແລະ ເກເດຣາ ຢູ່ໃນບ່ອນນັ້ນ ພວກເຂົາ

ອາໄສຢູ່ໃກ້ກັບກະສັດຈຶ່ງໄດ້ເຮັດວຽກໃຫ້ກັບກະສັດ

## ເຊື້ອສາຍຊີເມໂອນ ແລະຫົວເມືອງຕ່າງໆ ຂອງຊີເມໂອນ

24ລູກຊາຍຂອງຊີເມໂອນຊື່ ເນມູເອນ, ຢາມິນ ຢາຣິບ ເຊຣາ ແລະຊາອູນ 25ລູກຊາຍ
ຂອງຊາອູນຊື່ຊານລູມ ລູກຊາຍຂອງຊານລູມຊື່ມິບສາມ ລູກຊາຍຂອງມິບສາມຊື່ມິຊະມາ
26ລູກຊາຍຂອງມິຊະມາຊື່ຮາມມູເອນ ລູກຊາຍຂອງຮາມມູເອນຊື່ຊາກູເຣ ລູກຊາຍຂອງ
ຊາກູເຣຊື່ຊີເມອີ
27ຊີເມອີມີລູກຊາຍສິບຫົກຄົນ ແລະລູກສາວຫົກຄົນ ແຕ່ພີ່ນ້ອງຂອງຊີເມອີມີລູກຊາຍບໍ່
ຫລາຍຄົນ ແລະຄອບຄົວຂອງພວກເຂົາກໍບໍ່ໄດ້ເພີ່ມທະວີຫລາຍຂຶ້ນເໝືອນກັບພວກລູກຫລານຢູ-
ດາ 28ພວກເຂົາອາໄສຢູ່ໃນເມືອງເບເອ-ເຊບາ, ເມືອງໂມລາດາ, ເມືອງຮາຊາຊູອານ 29ແລະຢູ່
ເມືອງບິນຮາ, ເມືອງເອເຊັມ ແລະເມືອງໂຕລາດ 30ເມືອງເບທູເອນ, ເມືອງໂຮມາ, ເມືອງ
ຊິກລັກ 31ເມືອງເບັດ-ມັກກາໂບດ, ເມືອງຮາຊາ-ສູສິມ, ເມືອງເບັດ-ບີຣີ ແລະທີ່ເມືອງຊະອາ-
ຣາຢິມ ບັນດາເມືອງເຫລົ່ານີ້ເປັນຫົວເມືອງຂອງພວກເຂົາຈົນຮອດກະສັດດາວິດຂຶ້ນປົກຄອງ
32ແລະບັນດາບ້ານຂອງພວກເຂົາຊື່ວ່າ ເອຕາມ, ອາອີນ, ຣິມໂມນ, ໂຕເກນ ແລະອາຊານ
33ຫ້າຫົວເມືອງກັບບັນດາບ້ານທັງຫລາຍອ້ອມຮອບເມືອງເຫລົ່ານີ້ໄກໄປຈົນຮອດເມືອງບາອານ
ບ່ອນເຫລົ່ານີ້ ເປັນບ່ອນຢູ່ອາໃສຂອງພວກເຂົາ ແລະມີບັນຊີສຳມະໂນຄົວເຊື້ອສາຍຂອງພວກ
ເຂົາ

34ເມໂຊບັບ, ຢາມເລກ, ໂຢຊາລູກຊາຍອາມາຊີຢາ 35ໂຢເອນ ແລະເຢຮູລູກຊາຍຂອງໂຢ-
ຊີບີອາ, ໂຢຊີບີອາຜູ້ເປັນລູກຊາຍຂອງເສຣາຢາ ເສຣາຢາເປັນລູກຊາຍ ຂອງອາຊີເອນ 36ເອ-
ລີໂອນາຍ, ຢາອາໂກບາ, ເຢໂຊຮາຢາ, ອາສາຢາ, ອາດີເອນ, ເຢສີມີເອນ, ເບນາຢາ 37ແລະ
ຊີຊາລູກຊາຍຊິບພີ, ຊິບພີເປັນລູກຊາຍອັນໂລນ, ອັນໂລນເປັນລູກຊາຍເຢດາຢາ, ເປັນລູກ
ຊາຍຂອງຊິມຣີ, ເປັນລູກຊາຍເຊມາຢາ 38ບັນດາທ່ານທີ່ກ່າວຊື່ມານີ້ເປັນເຈົ້ານາຍໃນບັນດາ
ຄອບຄົວທັງຫລາຍຂອງພວກເຂົາ ແລະຄອບຄົວບັນພະບູລຸດຂອງພວກເຂົາກໍເພີ່ມທະວີຂຶ້ນຢ່າງ
ຫລວງຫລາຍ

## ຄົນຊີເມໂອນຊະນະເກໂດເຣ ແລະຄົນອາມາເລັກທີ່ພູເຂົາເສອີ

39ພວກເຂົາໄດ້ເດີນທາງໄປຮອດທາງເຂົ້າຂອງເມືອງເກໂດເຣຈົນຮອດທາງທິດຕາເວັນອອກ
ຂອງຮ່ອມພູເພື່ອຊອກຫາທົ່ງຫຍ້າໃຫ້ຝູງແບ້ ແລະແກະຂອງພວກເຂົາ 40ພວກເຂົາໄດ້ພົບທົ່ງ
ຫຍ້າທີ່ຊຽວງາມອຸດົມດີ ແລະແຜ່ນດິນນັ້ນກໍກວ້າງຂວາງງຽບສະຫງົບ ເປັນດິນທີ່ເກີດຜົນລະປູກ
ຫລາຍ ເພາະວ່າຊາວເມືອງທີ່ຢູ່ບ່ອນນັ້ນແຕ່ກ່ອນມາຈາກຄົນຮາມ 41ແລ້ວຄົນເຫລົ່ານີ້ຊຶ່ງມີບັນຊີ
ໃນສຳມະໂນຄົວໄດ້ເຂົ້າມາໃນສະໄໝຂອງເຮເຊກີຢາກະສັດແຫ່ງຢູດາ ແລະໄດ້ໂຈມຕີເຕັນ
ຂອງພວກເຂົາ ພ້ອມທັງບ່ອນຢູ່ອາໃສທັງຫລາຍຂອງພວກເຂົາກັບຊາວເມອູນີມທີ່ຢູ່ໃນບ່ອນນັ້ນ
ແລະກວາດລ້າງພວກເຂົາຈົນໝົດກ້ຽງຈົນເຖິງທຸກມື້ນີ້ ແລ້ວກໍຕັ້ງພູມລຳເນົາຢູ່ໃນບ່ອນອາໃສ
ຂອງພວກເຂົາ ເພາະບ່ອນນັ້ນມີທົ່ງຫຍ້າໃຫ້ແກ່ຝູງສັດຂອງພວກເຂົາ 42ຈາກສ່ວນໜຶ່ງຂອງ
ພວກເຂົາເຫລົ່ານັ້ນມີຄົນຊີເມໂອນຫ້າຮ້ອຍຄົນພາກັນໄປທີ່ພູເຂົາເສອີ ແລະທ່ານເປລາຕີຢາ

ແລະທ່ານ ເນອາຣິຢາ, ທ່ານ ເຣຟາຢາ ແລະທ່ານ ອຸດຊີເອນ ລູກຊາຍທັງຫລາຍຂອງ ອີຊີຊຶ່ງເປັນ
ເຈົ້ານາຍຂອງພວກເຂົາ [43]ແລະພວກເຂົາໄດ້ໂຈມຕີຊະນະຈຳພວກຄົນທີ່ເຫລືອຢູ່ຊຶ່ງໜີລອດພົ້ນ
ຈາກພວກອຳອາເລັກ ແລ້ວພວກເຂົາກໍຕັ້ງຖິ່ນຖານຢູ່ບ່ອນນັ້ນຈົນທຸກມື້ນີ້

# ບົດທີ 5

## ເຊື້ອສາຍຂອງຣູເບັນຈົນຮອດສະໄໝທີ່ເປັນຊະເລີຍ

[1]ລູກຊາຍຂອງ ຣູເບັນ ຊຶ່ງເປັນລູກກົກຂອງ ອິສຣາເອນ (ລາວເປັນລູກຫົວປີກໍຈິງແຕ່ຍ້ອນລາວ
ໄດ້ເຮັດໃຫ້ບ່ອນນອນພໍ່ຂອງລາວມີມົນທິນ ສິດທິລູກຫົວປີຂອງລາວຈຶ່ງຕົກຢູ່ກັບລູກຊາຍຂອງ
ໂຢເຊັບ ຜູ້ເປັນລູກຊາຍ ອິສຣາເອນ, ແຕ່ ໂຢເຊັບ ບໍ່ໄດ້ຂຶ້ນທະບຽນໄວ້ໃນສຳມະໂນຄົວເຊື້ອສາຍ
ຕາມສິດທິລູກຫົວປີ [2]ເຫດວ່າ ຢູດາ ເປັນຜູ້ໃຫຍ່ທີ່ສຸດໃນທ່າມກາງພວກອ້າຍນ້ອງຂອງຕົນ ແລະ
ເຈົ້ານາຍອົງໜຶ່ງກໍອອກມາຈາກພວກເຂົາແຕ່ວ່າສິດທິລູກກົກກໍເປັນຂອງ ໂຢເຊັບ)

[3]ລູກຊາຍຂອງ ຣູເບັນ ຊຶ່ງເປັນລູກກົກຂອງ ອິສຣາເອນ ຊື່ວ່າ ຮາໂນກ, ປານລູ, ເຮດຊະໂຣນ
ແລະ ການີ

[4]ລູກຊາຍຂອງ ໂຢເອນ ຄື ເຊມາຢາ ລູກຊາຍຂອງ ເຊມາຢາ ຄື ໂຄກ ລູກຊາຍຂອງ ໂຄກ ຄື
ຊີເມອີ [5]ລູກຊາຍຂອງຊີເມອີ ຊື່ວ່າ ມີກາ ລູກຊາຍຂອງ ມີກາ ຊື່ ເຣອາຢາ ລູກຊາຍຂອງ ເຣອາ-
ຢາ ຊື່ ບາອານ [6]ລູກຊາຍຂອງ ບາອານ ຊື່ ເບເອຣາ ຜູ້ທີ່ຕິກລັດ-ປີເລເສ ກະສັດເມືອງອັດຊີເຣຍ
ໄດ້ກວາດໄປເປັນທາດ ເພິ່ນເປັນເຈົ້ານາຍຂອງຄົນ ຣູເບັນ

[7]ແລະພວກພີ່ນ້ອງຂອງ ເພິ່ນຕາມຄອບຄົວທີ່ຂຶ້ນທະບຽນສຳມະໂນຄົວເຊື້ອສາຍໄວ້ນັ້ນ ຄື ເຈົ້າ
ເຢອີເອນ ແລະ ເຊຄາຣີຢາ [8]ແລະ ເບລາ ລູກຊາຍ ອາດຊາດ ລູກຊາຍ ເຊມາ ລູກຊາຍ ໂຢເອນ
ຜູ້ທີ່ອາໃສຢູ່ເມືອງ ອາໂຣເອ ແລະໄກອອກໄປຮອດເມືອງ ເນໂບ ແລະເມືອງ ບາອານ-ເມໂອນ

## ຄົນຣູເບັນເພີ່ມທະວີຫລາຍຂຶ້ນໃນທິດຕາເວັນອອກ

[9]ເພິ່ນອາໃສຢູ່ທາງທິດຕາເວັນອອກຍາວອອກໄປຮອດທາງເຂົ້າຖິ່ນແຫ້ງແລ້ງກັນດານ ຊຶ່ງຢູ່
ຟາກ ແມ່ນ້ຳ ເອຟຣາດ ເພາະຝູງສັດລ້ຽງຂອງ ເພິ່ນ ເພີ່ມທະວີຫລາຍ ຂຶ້ນ ໃນ ແຜ່ນດິນ ກີເລອາດ
[10]ໃນລາຊະການຂອງຊາອູນ ພວກເຂົາເຮັດສົງຄາມຕໍ່ສູ້ກັບຄົນ ຮັກຣີ ແລະພວກນີ້ໄດ້ລົ້ມຕາຍ
ດ້ວຍມືຂອງເພິ່ນ ພວກເຂົາອາໃສຢູ່ໃນເຕັນຂອງເພິ່ນຕະຫລອດຮອດແຖບຕາເວັນອອກຂອງ ກີ-
ເລອາດ

## ເຊື້ອສາຍຂອງຄາດ

[11]ລູກຫລານຂອງ ຄາດ ໄດ້ອາໃສຢູ່ໃກ້ຄຽງພວກເຂົາໃນ ແຜ່ນດິນ ບາຊານ ໄປຈົນຮອດ ເມືອງ
ສາເລກາ

[12]ໂຢເອນ ເປັນເຈົ້ານາຍ ແລະ ຊາຟາມ ເປັນຜູ້ຮອງ, ຢານາຍ ແລະ ຊາຟາດ ໃນ ບາຊານ
[13]ແລະພີ່ນ້ອງຂອງພວກເຂົາຕາມຄອບຄົວບັນພະບູລຸດຂອງພວກເຂົາຄື ມີກາເອນ, ເມຊຸນລຳ,
ເຊບາ, ໂຢຣາຍ, ຢາການ, ຊີອາ ແລະ ເຮເບ ເຈັດຄົນນຳກັນ

[14]ຄົນເຫລົ່ານີ້ເປັນລູກຂອງ ອາບີຮາຍ, ເປັນລູກຊາຍ ຮູຣີ, ຜູ້ເປັນລູກຊາຍຢາໂຣອາ, ເປັນລູກ

ຊາຍ ກີເລອາດ, ເປັນລູກຊາຍ ມີກາເອນ, ເປັນລູກຊາຍ ເຢຊີຊາຍ, ເປັນລູກຊາຍ ຢາໂດ, ຜູ້ເປັນ
ລູກຊາຍ ບູເຊ [15]ອາຮີ ເປັນລູກຊາຍ ອັບດີເອນ, ເປັນລູກຊາຍ ກູນີ, ຜູ້ເປັນເຈົ້ານາຍໃນຄອບຄົວ
ບັນພະບູລຸດຂອງພວກເຂົາ [16]ພວກເຂົາໄດ້ອາໃສຢູ່ໃນ ກີເລອາດ ໃນ ບາຊານ ແລະຕາມຫົວ
ເມືອງ ແລະໃນເຂດທົ່ງຫຍ້າທັງໝົດຂອງ ແຂວງຊາໂຣນ ຈົນສຸດເຂດແດນຂອງພວກເຂົາ [17]ຄົນ
ເຫລົ່ານີ້ທັງໝົດ ໄດ້ຂຶ້ນທະບຽນ ສຳມະໂນຄົວ ເຊື້ອສາຍ ໄວ້ໃນ ລາຊະການ ຂອງ ໂຢທາມ ກະສັດ
ແຫ່ງ ຢູດາ ແລະໃນລາຊະການຂອງ ເຢໂຣໂບອາມ ກະສັດແຫ່ງ ອິສຣາເອນ

## ລູກຫລານຣູເບັນ ຄົນຄາດ
## ແລະຄົນຕະກູນມານາເຊເຄິ່ງໜຶ່ງຕີຊະນະຊົນຊາດອື່ນ

[18]ພວກລູກຫລານ ຣູເບັນ, ຄົນ ຄາດ ແລະຄົນຕະກູນ ມານາເຊ ເຄິ່ງໜຶ່ງມີຄົນເກັ່ງກ້າທີ່ຖືໂລ,
ດາບ ແລະມີຄວາມຊຳນານໃນການຍິງທະນູ ໃນການເຮັດເສິກມີສີ່ໝື່ນສີ່ພັນເຈັດຮ້ອຍຫົກສິບ
ຄົນ ກຽມພ້ອມທີ່ຈະເຂົ້າສະໜາມຮົບ [19]ພວກເຂົາເຮັດເສິກກັບຄົນ ຮັກຣີ, ເຢຕູເຣ, ນາຟີດ
ແລະ ໂນດາບ [20]ເມື່ອພວກເຂົາໄດ້ຮັບຄວາມຊ່ວຍເຫລືອໃນການຕໍ່ສູ້ ຄົນ ຮັກຣີ ແລະຄົນທັງ-
ຫລາຍທີ່ຢູ່ຝ່າຍພວກສັດຕູທຸກຄົນ ກໍຖືກມອບໄວ້ໃນມືຂອງພວກເຂົາ ເພາະພວກເຂົາຮ້ອງທູນຕໍ່
ພຣະເຈົ້າ ໃນການສູ້ຮົບ ແລະພຣະອົງໄດ້ປະທານຕາມຄຳທູນຂອງພວກເຂົາ ເພາະພວກເຂົາໄວ້
ວາງໃຈໃນພຣະອົງ [21]ພວກເຂົາໄດ້ກວາດເອົາຝູງສັດຂອງຂ້າເສິກໄປ ຄືອູດຫ້າໝື່ນໂຕ ແກະ
ສອງແສນຫ້າໝື່ນໂຕ ລາສອງພັນ ແລະຄົນໜຶ່ງແສນຄົນ [22]ເພາະພວກເຂົາໄດ້ລົ້ມຕາຍເສຍ
ຫາຍຫລາຍ ດ້ວຍການເສິກໃນເທື່ອນັ້ນຊຶ່ງເປັນມາຈາກ ພຣະເຈົ້າ ແລະພວກເຂົາອາໃສຢູ່ໃນ
ສະຖານທີ່ຂອງພວກເຂົາຈົນຖືກກວາດໄປເປັນຊະເລີຍ

[23]ຄົນຕະກູນ ມານາເຊ ເຄິ່ງໜຶ່ງອາໄສຢູ່ໃນແຜ່ນດິນນັ້ນ ພວກເຂົາມີຄົນເພີ່ມຂຶ້ນຫລາຍຕັ້ງແຕ່
ເມືອງ ບາຊານ ຮອດເມືອງ ບາອານ-ເຮີໂມນ, ເສນີ ແລະພູເຂົາ ເຮີໂມນ

[24]ຕໍ່ໄປນີ້ເປັນຫົວໜ້າຕະກູນບັນພະບູລຸດຂອງພວກເຂົາຄື ເອເຟ, ອີຊີ, ເອລີເອນ, ອັດຊະຣີ-
ເອນ, ເຢເຣມີຢາ ໂຮດາວີຢາ ແລະຢາດີເອນ ເປັນຄົນທີ່ແຂງແຮງ ມີໃຈເກັ່ງກ້າ ມີຊື່ສຽງດີ
ເປັນຫົວໜ້າຄອບຄົວບັນພະບູລຸດຂອງ ພວກເຂົາ

## ຄົນມານາເຊຂາບໄຫວ້ຮູບເຄົາລົບ

[25]ແຕ່ພວກເຂົາໄດ້ຕໍ່ສູ້ ພຣະເຈົ້າ ແຫ່ງບັນພະບູລຸດຂອງພວກເຂົາ ແລະໄດ້ຫລິ້ນຊູ້ກັບບັນດາ
ພະ ທັງຫລາຍ ຂອງ ຊົນ ຊາດ ທັງຫລາຍ ທີ່ ພຣະເຈົ້າ ໄດ້ ທຳລາຍ ຕໍ່ໜ້າ ພວກ ເຂົາ ນັ້ນ [26]ສະນັ້ນ,
ພຣະເຈົ້າ ຂອງ ອິສຣາເອນ ຈຶ່ງ ໄດ້ກະຕຸ້ນຈິດໃຈຂອງ ປູນ ກະສັດ ແຫ່ງ ອັດຊີເຣຍ ແລະຈິດໃຈ
ຂອງ ຕິກລັດ-ປີເລເສ ກະສັດແຫ່ງ ອັດຊີເຣຍ ແລະພະອົງໄດ້ກວາດເອົາຊາວ ຣູເບັນ ຊາວ ຄາດ
ແລະຕະກູນ ມານາເຊ ເຄິ່ງໜຶ່ງ ໄປເມືອງ ຮາລາ, ຮາໂບ, ຮາຣາ ແລະແມ່ນ້ຳເມືອງ ໂກຊານ
ຈົນເຖິງທຸກມື້ນີ້

# ບົດທີ 6

## ເຊື້ອສາຍຂອງເລວີ

1ລູກຊາຍຂອງ ເລວີຊື່ວ່າ ເກໂຊນ, ໂກຣາດ ແລະ ເມຣາຣີ
2ລູກຊາຍຂອງ ໂກຣາດຊື່ ອຳຣາມ, ອິດຊະຮາ, ເຮັບໂຣນ ແລະ ອຸດຊີເອນ
3ລູກຂອງ ອຳຣາມ ຊື່ ອາໂຣນ, ໂມເຊ ແລະນາງ ມີຣີອາມ ແລະລູກຊາຍ ອາໂຣນ ຊື່ ນາ-
ດາບ, ອາບີຮູ, ເອເລອາຊາ ແລະ ອີທາມາ

## ຜູ້ສືບສາຍເລືອດຂອງພວກປະໂລຫິດໃນສະໄໝກ່ອນເປັນຊະເລີຍ

4ເອເລອາຊາ ເປັນບິດາຂອງ ຟີເນຮາດ ຟີເນຮາດ ເປັນບິດາຂອງ ອາບີຊູອາ 5ອາບີຊູອາ ເປັນ
ບິດາຂອງ ບຸກກີ ບຸກກີ ເປັນບິດາຂອງ ອຸດຊີ 6ອຸດຊີ ເປັນບິດາຂອງ ເຊຣາຮີຢາ ເຊຣາຮີຢາ ເປັນ
ບິດາຂອງ ເມຣາໂຢດ 7ເມຣາໂຢດ ເປັນບິດາຂອງ ອາມາຣີຢາ ອາມາຣີຢາ ເປັນບິດາຂອງ ອາຮີ-
ຕຸບ 8ອາຮີຕຸບ ເປັນບິດາຂອງຊາໂດກ ຊາໂດກ ເປັນບິດາຂອງ ອາຮີມາອາດ 9ອາຮີມາອາດ ເປັນ
ບິດາຂອງ ອາຊາຣີຢາ ອາຊາຣີຢາ ເປັນບິດາຂອງ ໂຢຮານານ 10ແລະ ໂຢຮານານ ເປັນບິດາຂອງ
ອາຊາຣີຢາ (ເພິ່ນນີ້ແຫລະທີ່ເຮັດໜ້າທີ່ປະໂລຫິດຢູ່ໃນພຣະວິຫານຊຶ່ງ ໂຊໂລໂມນ ໄດ້ສ້າງໃນນະ-
ຄອນ ເຢຣູຊາເລັມ) 11ອາຊາຣີຢາ ເປັນບິດາຂອງ ອາມາຣີຢາ ອາມາຣີຢາ ເປັນບິດາຂອງ ອາຮີ-
ຕຸບ 12ອາຮີຕຸບ ເປັນບິດາຂອງຊາໂດກ ຊາໂດກ ເປັນບິດາຂອງຊານລູມ 13ຊານລູມ ເປັນບິດາ
ຂອງ ຮິນກີຢາ ຮິນກີຢາ ເປັນບິດາຂອງ ອາຊາຣີຢາ 14ອາຊາຣີຢາ ເປັນບິດາຂອງ ເສຣາຢາ ເສ-
ຣາຢາ ເປັນບິດາຂອງ ເຢໂຮຊາດັກ 15ແລະ ເຢໂຮຊາດັກ ຖືກນຳໄປຕອນທີ່ ພຣະຜູ້ເປັນເຈົ້າ ໄດ້ໃຫ້
ຢູດາ ແລະ ເຢຣູຊາເລັມ ຖືກກວາດໄປເປັນຊະເລີຍ ດ້ວຍມືຂອງ ເນບູກາດເນັດຊາ

## ແຕ່ລະຄອບຄົວຂອງລູກຊາຍສາມຄົນຂອງເລວີ

16ລູກຊາຍຂອງ ເລວີຄື ເກໂຊນ ໂກຣາດ ແລະ ເມຣາຣີ
17ຕໍ່ໄປນີ້ແມ່ນຊື່ລູກຊາຍຂອງ ເກໂຊນຄື ລິບນີ ແລະຊີເມອີ
18ລູກຊາຍຂອງ ໂກຣາດຄື ອຳຣາມ, ອິດຊະຮາ, ເຮັບໂຣນ ແລະ ອຸດຊີເອນ
19ລູກຊາຍຂອງ ເມຣາຣີ ຊື່ວ່າ ມາລີ ແລະ ມູຊີ ເຫລົ່ານີ້ແມ່ນຄອບຄົວຂອງຄົນ ເລວີ ຕາມ
ເຊື້ອສາຍພໍ່ຂອງພວກເຂົາ

20ລູກຊາຍຂອງ ເກໂຊນ ຄື ລິບນີ, ລູກຊາຍຂອງ ລິບນີ ຄື ຢາຮາດ, ລູກຊາຍຂອງ ຢາຮາດ ຄື
ຊິມມາ 21ລູກຊາຍຂອງຊິມມາ ຄື ໂຢອາ ລູກຊາຍຂອງ ໂຢອາ ຄື ອິດໂດ ລູກຊາຍຂອງ ອິດໂດ ຄື
ເຊຣາ ລູກຊາຍຂອງ ເຊຣາ ຄື ເຢອາເທຣາຍ

22ລູກຊາຍຂອງ ໂກຣາດ ຄື ອຳມີນາດາບ ລູກຊາຍຂອງ ອຳມີນາດາບ ຄື ໂກຣາ ລູກຊາຍ
ຂອງ ໂກຣາ ຄື ອັດສີ 23ລູກຊາຍຂອງ ອັດສີ ຄື ເອນການາ ລູກຊາຍຂອງ ເອນການາ ຄື ເອບີອາ-
ສັບ ລູກຊາຍຂອງ ເອບີອາສັບ ຄື ອັດສີ 24ລູກຊາຍຂອງ ອັດສີ ຄື ຕາຮາດ ລູກຊາຍຂອງ ຕາຮາດ
ຄື ອຸຣີເອນ ລູກຊາຍຂອງ ອຸຣີເອນ ຄື ອຸດຊີຢາ ລູກຊາຍຂອງ ອຸດຊີຢາ ຄື ຊາອູນ

25ລູກຊາຍຂອງ ເອນການາ ຄື ອາມາສາຍ ແລະ ອາຮີໂມດ 26ລູກຊາຍຂອງ ເອລີອາບ ຄື
ໂຊຟາຍ ລູກຊາຍຂອງ ໂຊຟາຍ ຄື ນາຮາດ 27ລູກຊາຍຂອງ ນາຮາດ ຄື ເອລີອາບ ລູກຊາຍຂອງ

ເອລີອາບ ຄື ເຢໂຣຮາມ ລູກຊາຍຂອງ ເຢໂຣຮາມ ຄື ເອນການາ
[28]ລູກຊາຍຂອງຊາມູເອນ ຄື ໂຢເອນ ເປັນລູກຫົວປີຂອງເພິ່ນ ແລະ ອາບີຢາ
[29]ລູກຊາຍຂອງ ເມຣາຣີ ຄື ມາລີ ລູກຊາຍຂອງ ມາລີ ຄື ລິບນີ ລູກຊາຍຂອງລິບນີ ຄື ຊີເມອີ
ລູກຊາຍຂອງຊີເມອີ ຄື ອຸດຊາ [30]ລູກຊາຍຂອງ ອຸດຊາ ຄື ຊີເມອີ ລູກຊາຍຂອງຊີເມອີ ຄື ຮັກກີຢາ
ລູກຊາຍຂອງ ຮັກກີຢາ ຄື ອາສາຢາ
[31]ຄົນເຫລົ່ານີ້ເປັນບຸກຄົນທີ່ດາວິດ ໄດ້ແຕ່ງຕັ້ງໃຫ້ເບິ່ງແຍງການຮ້ອງເພງໃນພຣະວິຫານຂອງ
ພຣະຜູ້ເປັນເຈົ້າ ຕັ້ງແຕ່ຫີບຄຳໝັ້ນສັນຍາໄດ້ມາຕັ້ງຢູ່ໃນບ່ອນນັ້ນ [32]ພວກເຂົາໄດ້ບົວລະບັດຢູ່ຕໍ່-
ໜ້າທີ່ພັກອາໄສໃນຫໍເຕັນ ແຫ່ງຊຸມນຸມ (ຫໍເຕັນສັກສິດ) ດ້ວຍການຮ້ອງເພງຈົນ ໂຊໂລໂມນ ໄດ້
ສ້າງພຣະວິຫານຂອງ ພຣະຜູ້ເປັນເຈົ້າ ໃນນະຄອນ ເຢຣູຊາເລັມ ແລະພວກເຂົາໄດ້ປະຕິບັດໜ້າທີ່
ຂອງພວກເຂົາຕາມຕຳແໜ່ງ
[33]ຕໍ່ໄປນີ້ເປັນບຸກຄົນທີ່ປະຕິບັດງານຢູ່ພ້ອມກັບລູກຫລານຂອງພວກເຂົາຄື ພວກລູກຫລານ
ໂກຮາດ ມີ ເຮມານ ນັກຮ້ອງ, ຜູ້ເປັນລູກຊາຍ ໂຢເອນ, ຜູ້ເປັນລູກຊາຍ ຊາມູເອນ [34]ເປັນລູກຊາຍ
ເອນການາ, ເປັນລູກຊາຍ ເຢໂຣຮາມ, ເປັນລູກຊາຍ ເອລີເອນ, ເປັນລູກຊາຍ ໂຕອາ [35]ໂຕອາ
ເປັນລູກຊາຍ ຊູບ, ເປັນລູກຊາຍ ເອນການາ, ເປັນລູກຊາຍ ມາຮາດ, ເປັນລູກຊາຍ ອາມາສາຍ
[36]ອາມາໄຊເປັນລູກຊາຍ ເອນການາ, ເປັນລູກຊາຍ ໂຢເອນ, ເປັນລູກຊາຍ ອາຊາຣີຢາ, ເປັນລູກ
ຊາຍ ເຊຟານີຢາ [37]ເຊຟານີຢາ ເປັນລູກຊາຍ ຕາຮາດ, ເປັນລູກຊາຍ ອັດສີ, ເປັນລູກຊາຍ ເອບີ-
ອາສັບ, ເປັນລູກຊາຍ ໂກຣາ [38]ໂກຣາ ເປັນລູກຊາຍ ອິດຊະຮາ, ເປັນລູກຊາຍ ໂກຮາດ, ເປັນລູກ
ຊາຍ ເລວີ, ເປັນລູກຊາຍ ອິສຣາເອນ
[39]ແລະ ອາສັບ ພີ່ນ້ອງຂອງພວກເຂົາ ຜູ້ຊຶ່ງຢືນຢູ່ຂ້າງຂວາມືຂອງພວກເຂົາ ຄື ອາສັບ ລູກຊາຍ
ເບເຣກີຢາ ຜູ້ເປັນລູກຊາຍຂອງຊີເມອາ [40]ຊີເມອາ ເປັນລູກຊາຍ ມີກາເອນ, ເປັນລູກຊາຍ ບາ-
ອາເສຢາ, ຜູ້ເປັນລູກຊາຍ ມັນກີຢາ [41]ມັນກີຢາຜູ້ເປັນລູກຊາຍ ເອທະນີ, ຜູ້ເປັນລູກຊາຍ ເຊຣາ,
ຜູ້ເປັນລູກຊາຍ ອາດາຢາ [42]ອາດາຢາຜູ້ເປັນລູກຊາຍ ເອທານ, ຜູ້ເປັນລູກຊາຍຊິມມາ, ຜູ້ເປັນ
ລູກຊາຍຊີເມອີ [43]ຊີເມອີຜູ້ເປັນລູກຊາຍຢາຮາດ, ຜູ້ເປັນລູກຊາຍ ເກໂຊມ, ຜູ້ເປັນລູກຊາຍ ເລວີ
[44]ແລະຢູ່ທີ່ຢູ່ຂ້າງຊ້າຍມືມີລູກຊາຍຂອງ ເມຣາຣີ ພີ່ນ້ອງຂອງພວກເຂົາຄື ເອທານ ຜູ້ເປັນລູກ
ຊາຍ ກີຊີ, ຜູ້ເປັນລູກຊາຍ ອັບດີ, ຜູ້ເປັນລູກຊາຍ ມັນລຸກ [45]ມັນລຸກຜູ້ເປັນລູກຊາຍ ຮາຊາບີຢາ,
ຜູ້ເປັນລູກຊາຍ ອາມາຊີຢາ, ຜູ້ເປັນລູກຊາຍຮິນກີຢາ [46]ຮິນກີຢາຜູ້ເປັນລູກຊາຍ ອາມຊີ, ຜູ້ເປັນ
ລູກຊາຍ ບານີ, ຜູ້ເປັນລູກຊາຍ ເຊເມ [47]ເຊເມ ຜູ້ເປັນລູກຊາຍ ມາລີ, ຜູ້ເປັນລູກຊາຍ ມູຊີ, ຜູ້ເປັນ
ລູກຊາຍ ເມຣາຣີ, ຜູ້ເປັນລູກຊາຍ ເລວີ
[48]ແລະຄົນ ເລວີ ພີ່ນ້ອງຂອງພວກເຂົາໄດ້ຮັບ ແຕ່ງຕັ້ງໃຫ້ປະຕິບັດງານທຸກຢ່າງໃນຫໍເຕັນ ແຫ່ງ
ພຣະວິຫານຂອງ ພຣະເຈົ້າ

## ຜູ້ສືບເຊື້ອສາຍຂອງອາໂຣນ

[49]ອາໂຣນ ແລະພວກລູກຊາຍຂອງເພິ່ນໄດ້ຖວາຍເຄື່ອງບູຊາເທິງ ແທ່ນເຜົາເຄື່ອງບູຊາ ແລະ
ເທິງ ແທ່ນເຄື່ອງຫອມ ເພື່ອປະຕິບັດງານທັງໝົດໃນບ່ອນບໍລິສຸດທີ່ສຸດ ແລະເພື່ອໄຖ່ໂທດບາບ

ຂອງຊາວອິສຣາເອນ ຕາມບັນດາຖ້ອຍຄຳທີ່ໂມເຊ ຜູ້ຮັບໃຊ້ຂອງພຣະເຈົ້າໄດ້ສັ່ງໄວ້
[50]ຕໍ່ໄປນີ້ເປັນລູກຊາຍຂອງອາໂຣນຄື ເອເລອາຊາ ລູກຊາຍຂອງເອເລອາຊາຄືຟີເນຮາດ
ລູກຊາຍຂອງຟີເນຮາດຄືອາບີຊູອາ [51]ລູກຊາຍອາບີຊູອາຄືບຸກກີ, ລູກຊາຍຂອງບຸກກີຄືອຸດຊີ,
ລູກຊາຍຂອງອຸດຊີຄືເຊຣາຮີຢາ [52]ລູກຊາຍຂອງເຊຣາຮີຢາຄືເມຣາໂຢດ, ລູກຊາຍຂອງເມຣາ-
ໂຢດຄືອາມາຣີຢາ, ລູກຊາຍຂອງອາມາຣີຢາຄືອາຮີຕູບ [53]ລູກຊາຍຂອງອາຮີຕູບຄືຊາໂດກ,
ລູກຊາຍຂອງຊາໂດກຄືອາຮີມາອາດ

## ບັນດາຫົວເມືອງຂອງຄົນເລວີ[ກ]

[54]ຕໍ່ໄປນີ້ເປັນບ່ອນຢູ່ອາໃສຂອງພວກເຂົາຕາມພູມລຳເນົາໃນເຂດແດນຂອງພວກເຂົາຄື ລູກ
ຫລານຂອງອາໂຣນ ຈາກຄອບຄົວຊາວໂກຮາດ ເພາະວ່າສະຫລາກຕົກຖືກພວກເຂົາ
[55]ພວກເຂົາໄດ້ຮັບເມືອງເຮັບໂຣນໃນແຜ່ນດິນຢູດາ ແລະທົ່ງຫຍ້າຊຶ່ງຢູ່ອ້ອມຮອບນັ້ນ [56]ແຕ່
ວ່າທົ່ງນາ ແລະຊົນນະບົດຂອງເມືອງນັ້ນ ພວກເຂົາໄດ້ຍົກໃຫ້ແກ່ກາເລັບລູກຊາຍເຢຟຸນເນ
[57]ພວກເຂົາໄດ້ມອບເມືອງຕ່າງໆແຫ່ງຢູດາ ແກ່ລູກຫລານຂອງອາໂຣນຄືເມືອງເຮັບໂຣນຊຶ່ງເປັນ
ເມືອງລີ້ໄພ ເມືອງລິບນາ ແລະທົ່ງຫຍ້າ, ເມືອງຢັດຕີ, ເມືອງເອຊະເຕໂມອາ ກັບທົ່ງຫຍ້າ [58]ຮີ-
ເລນພ້ອມກັບທົ່ງຫຍ້າ, ເດບີພ້ອມກັບທົ່ງຫຍ້າ [59]ອາຊານພ້ອມກັບທົ່ງຫຍ້າ ແລະເບັດ-ເຊເມັດ
ພ້ອມກັບທົ່ງຫຍ້າ
[60]ຈາກດິນແດນຕະກູນເບັນຢາມິນກໍມອບເມືອງເກບາພ້ອມກັບທົ່ງຫຍ້າ ອາເລເມັດພ້ອມກັບ
ທົ່ງຫຍ້າ ແລະອານາໂທດພ້ອມກັບທົ່ງຫຍ້າ; ຫົວເມືອງທັງໝົດຂອງພວກເຂົາທຸກຄອບຄົວເປັນ
ສິບສາມຫົວເມືອງດ້ວຍກັນ [61]ສ່ວນລູກຫລານໂກຮາດທີ່ຍັງເຫລືອຢູ່ນັ້ນໄດ້ຮັບສ່ວນມອບໂດຍ
ສະຫລາກທີ່ໄດ້ຈາກຄອບຄົວຂອງຕະກູນເອຟຣາຢິມ, ຈາກຕະກູນດານ ແລະຈາກຕະກູນມາ-
ນາເຊເຄິ່ງໜຶ່ງມີສິບຫົວເມືອງ
[62]ແລະມອບສິບສາມຫົວເມືອງຈາກຕະກູນອິດຊາຄາ, ຕະກູນອາເຊ, ຕະກູນນັບທາລີ ແລະ
ຈາກຕະກູນມານາເຊໃນບາຊານໃຫ້ແກ່ຄົນເກໂຊມຕາມຄອບຄົວຂອງພວກເຂົາ
[63]ແລະມອບສິບສອງຫົວເມືອງຈາກຕະກູນຣູເບັນ, ຕະກູນຄາດ ແລະຕະກູນເຊບູລູນໃຫ້ແກ່
ຄົນ ເມຣາຣີຕາມ ຄອບຄົວຂອງພວກເຂົາ
[64]ລູກ ຫລານ ອິສຣາເອນ ໄດ້ ມອບ ຫົວ ເມືອງ ທັງຫລາຍ ພ້ອມ ກັບ ທົ່ງ ຫຍ້າ ໃຫ້ ແກ່ ຊາວ ເລວີ.
[65]ແລະ ລູກຫລານ ອິສຣາເອນ ໄດ້ ມອບ ດ້ວຍ ການ ຈັບ ສະຫລາກ ໂດຍ ທີ່ ພວກ ເຂົາ ເອີ້ນ ຫົວ ເມືອງ
ເຫລົ່ານັ້ນຈາກຕະກູນຢູດາ ຕະກູນຊີເມໂອນ ແລະຕະກູນເບັນຢາມິນ
[66]ສຳລັບບັນດາຄອບຄົວລູກຫລານໂກຮາດທີ່ເຫລືອຢູ່ມີຫົວເມືອງອານເປັນດິນແດນຂອງພວກ
ເຂົາຈາກຕະກູນ ເອຟຣາຢິມ [67]ຊາວອິສຣາເອນໄດ້ມອບເມືອງລີ້ໄພ ຄືເມືອງເຊເຄັມພ້ອມກັບ
ທົ່ງຫຍ້າໃນຖິ່ນພູເຂົາເອຟຣາຢິມ ແລະເມືອງເກເຊ ພ້ອມກັບທົ່ງຫຍ້າ [68]ເມືອງໂຢກເມອາມ
ພ້ອມກັບທົ່ງຫຍ້າ, ເມືອງເບັດ-ໂຮໂຣນພ້ອມກັບທົ່ງຫຍ້າ [69]ເມືອງອາຢາໂລນພ້ອມກັບທົ່ງຫຍ້າ,
ເມືອງກັດ-ຣິມໂມນພ້ອມກັບທົ່ງຫຍ້າ

[ກ]ໂຢຊວຍ 21:1-42

70ແລະມອບເມືອງຈາກຕະກູນ ມານາເຊ ເຄິ່ງໜຶ່ງ ຄືເມືອງ ອາເນ ພ້ອມກັບທົ່ງຫຍ້າ, ເມືອງ ບີ-
ເລອາມ ພ້ອມກັບທົ່ງຫຍ້າ ໃຫ້ແກ່ຄອບຄົວລູກຫລານ ໂກຮາດ ທີ່ຍັງເຫລືອຢູ່
71ດິນແດນຂອງ ມານາເຊ ເຄິ່ງຕະກູນທີ່ມອບໃຫ້ແກ່ລູກຫລານ ເກໂຊມ ຄື ເມືອງ ໂກລານ ໃນ
ແຂວງ ບາຊານ ພ້ອມກັບທົ່ງຫຍ້າ ແລະ ອັດຊະຕະໂຣດ ພ້ອມກັບທົ່ງຫຍ້າ
72ຈາກຕະກູນ ອິດຊາຄາ ຄືເມືອງ ເກເດັດ ພ້ອມກັບທົ່ງຫຍ້າ, ເມືອງ ດາເບຣາດ ພ້ອມກັບທົ່ງ
ຫຍ້າ 73ແລະເມືອງ ຣາໂມດ ພ້ອມກັບທົ່ງຫຍ້າ ແລະເມືອງ ອາເນມ ພ້ອມກັບທົ່ງຫຍ້າ
74ຈາກຕະກູນ ອາເຊ ຄື ເມືອງ ມາຊັນ ພ້ອມກັບທົ່ງຫຍ້າ ເມືອງ ອັບໂດນ ພ້ອມກັບທົ່ງຫຍ້າ
75ເມືອງ ຮູກໂກກ ພ້ອມກັບທົ່ງຫຍ້າ ແລະເມືອງ ເຣໂຮບ ພ້ອມກັບທົ່ງຫຍ້າ
76ແລະຈາກຕະກູນ ນັບທາລີ ຄື ເມືອງ ເກເດັດ ໃນ ຄາລີເລ ພ້ອມກັບທົ່ງຫຍ້າ, ເມືອງ ຮຳໂມນ
ພ້ອມກັບທົ່ງຫຍ້າ, ເມືອງ ກີຣິອາດທາຢິມ ພ້ອມກັບທົ່ງຫຍ້າ
77ສ່ວນຄົນ ເມຣາຣີ ທີ່ເຫລືອຢູ່ນັ້ນໄດ້ຮັບຈາກຕະກູນ ເຊບູລູນ ຄື ເມືອງ ຣິມໂມໂນ ພ້ອມກັບທົ່ງ
ຫຍ້າ, ເມືອງ ຕາໂບ ພ້ອມກັບທົ່ງຫຍ້າ
78ແລະຟາກ ແມ່ນ້ຳ ຢໍແດນ ເບື້ອງນັ້ນຖັດຈາກ ເຢຣິໂກ ທາງທິດຕາເວັນອອກຂອງ ແມ່ນ້ຳ ຢໍ-
ແດນ; ຈາກຕະກູນ ຣູເບັນ ຄື ເມືອງ ເບເຊ ໃນຖິ່ນແຫ້ງແລ້ງກັນດານພ້ອມກັບທົ່ງຫຍ້າ, ເມືອງ
ຢາຊາ ພ້ອມກັບທົ່ງຫຍ້າ 79ເມືອງ ເກເດໂມດ ພ້ອມກັບທົ່ງຫຍ້າ ແລະເມືອງ ເມຟະອາດ ພ້ອມກັບ
ທົ່ງຫຍ້າ
80ແລະຈາກຕະກູນ ຄາດ ຄື ເມືອງ ຣາໂມດ ໃນແຂວງ ກີເລອາດ ພ້ອມກັບທົ່ງຫຍ້າ, ເມືອງ
ມາຮານາຢິມ ພ້ອມກັບທົ່ງຫຍ້າ 81ເມືອງ ເຮັດຊະໂບນ ພ້ອມກັບທົ່ງຫຍ້າ ແລະເມືອງ ຢາເຊ ພ້ອມ
ກັບທົ່ງຫຍ້າ

# ບົດທີ 7

## ລູກຊາຍຂອງອິດຊາຄາ

1ລູກຊາຍຂອງ ອິດຊາຄາ ຄື ໂຕລາ ປູອາ ຢາຊຸບ ແລະຊິມໂຣນ ສີ່ຄົນນຳກັນ
2ລູກຊາຍຂອງ ໂຕລາ ຄື ອຸດຊີ, ເຣຟາຢາ, ເຢຣີເອນ, ຢາຣະມາຍ, ອິບສາມ ແລະ ເຊມູ-
ເອນ, ຫົວໜ້າໃນຄອບຄົວບັນພະບູລຸດຂອງພວກເຂົາຄື ໂຕລາ ຜູ້ເປັນທະຫານທີ່ມີໃຈກ້າຫານ
ຂອງ ເຊື້ອສາຍຂອງພວກ ເຂົາ ແລະ ຈຳນວນຂອງຄົນ ເຫລົ່ານີ້ໃນສະໄໝຂອງ ດາວິດ ເປັນສອງ
ໝື່ນສອງພັນຫົກຮ້ອຍຄົນ
3ລູກຊາຍຂອງ ອຸດຊີ ຄື ອິດຊະຣາຢາ ແລະລູກຊາຍຂອງ ອິດຊະຣາຢາ ຄື ມີກາເອນ, ໂອບາ-
ດີຢາ, ໂຢເອນ ແລະ ອິດຊີຢາ ຫ້າຄົນນຳກັນ ທຸກຄົນເປັນຫົວໜ້າ
4ແລະ ພ້ອມກັບ ຄົນ ເຫລົ່ານີ້ຕາມ ເຊື້ອສາຍ ຂອງພວກ ເຂົາ, ຕາມຄອບຄົວບັນພະບູລຸດ ຂອງ
ພວກ ເຂົາມີກອງທະຫານທີ່ຈະ ເຮັດ ເສິກສາມໝື່ນຫົກພັນຄົນ ເພາະພວກ ເຂົາມີເມຍ ແລະລູກ
ຊາຍຫລາຍຄົນ 5ຍາດພີ່ນ້ອງຂອງພວກເຂົາຈາກບັນດາຄອບຄົວຂອງ ອິດຊາຄາ ເປັນຄົນທີ່ແຂງ-
ແຮງອົງອາດກ້າຫານ ມີທັງໝົດ ແປດໝື່ນເຈັດພັນຄົນຕາມທີ່ໄດ້ຂຶ້ນທະບຽນໄວ້ໃນສຳມະໂນຄົວ

## ເຊື້ອສາຍຂອງເບັນຢາມິນ

[6]ລູກຊາຍຂອງ ເບັນຢາມິນຄື ເບລາ, ເບເຄ, ແລະ ເຢດີອາເອນ ສາມຄົນນຳກັນ
[7]ລູກຊາຍຂອງ ເບລາຄື ເອັດຊະໂບນ, ອຸດຊີ, ອຸດຊີເອນ, ເຢຣີໂມດ ແລະ ອີຣີ ຫ້າຄົນນຳ
ກັນ ເປັນຫົວໜ້າຄອບຄົວຂອງບັນພະບູລຸດ, ຄົນທີ່ມີກຳລັງອົງອາດກ້າຫານ ແລະຈຳນວນທີ່ຂຶ້ນ
ທະບຽນໄວ້ໃນສຳມະໂນຄົວເຊື້ອສາຍຂອງພວກເຂົາມີສອງໝື່ນສອງພັນສາມສິບສີ່ຄົນ
[8]ລູກຊາຍຂອງ ເບເຄຄື ເຊມີຣາ, ໂຢອາດ, ເອລີເອເຊ, ເອລີໂອນາຍ, ອົມຣີ, ເຢເຣໂມດ,
ອາບີຢາ, ອານາໂທດ ແລະ ອາເລເມດ ທັງໝົດນີ້ເປັນລູກຊາຍຂອງ ເບເຄ [9]ແລະຈຳນວນທີ່ຂຶ້ນ
ທະບຽນໄວ້ໃນສຳມະໂນຄົວເຊື້ອສາຍ ຕາມເຊື້ອສາຍຂອງພວກເຂົາ, ຫົວໜ້າຄອບຄົວບັນພະບູ-
ລຸດຂອງພວກເຂົາ, ຄົນທີ່ມີກຳລັງມີຄວາມອົງອາດກ້າຫານມີສອງໝື່ນສອງຮ້ອຍຄົນ
[10]ລູກຊາຍຂອງ ເຢດີອາເອນຄື ບິນຮານ ແລະລູກຊາຍຂອງ ບິນຮານຄື ເຢອຸດ, ເບັນຢາມິນ,
ເອຮຸດ, ເຄນາອານາ, ເຊທານ ຕາຊິດ ແລະ ອາຮີຊາຮາ [11]ທັງໝົດນີ້ເປັນລູກຊາຍຂອງ ເຢດີ-
ອາເອນ ຕາມຫົວໜ້າຄອບຄົວບັນພະບູລຸດຂອງພວກເຂົາ, ຄົນທີ່ມີກຳລັງມີຄວາມອົງອາດກ້າ-
ຫານມີໜຶ່ງໝື່ນເຈັດພັນສອງຮ້ອຍຄົນພ້ອມທີ່ຈະເຮັດເສິກ
[12]ແລະຊຸບປີມ ແລະຮຸບປີມ ເປັນລູກອີ ແລະຮູຊິມ ລູກຊາຍອາເຮ

## ເຊື້ອສາຍຂອງນັບທາລີ

[13]ລູກຊາຍຂອງ ນັບທາລີຄື ຢາຊີເອນ, ກູນີ, ເຢດເຊ ແລະຊານລູມ ລູກຊາຍຂອງນາງ
ບິນຮາ

## ເຊື້ອສາຍຂອງມານາເຊ

[14]ລູກຊາຍຂອງ ມານາເຊຄື ອາຊະຣີເອນ ຊຶ່ງເມຍນ້ອຍຂອງເພິ່ນຊາວ ອາຣາມ ໄດ້ໃຫ້ກຳ-
ເນີດ, ນາງໄດ້ປະສູດລູກ ຊື່ມາກີພໍ່ຂອງ ກີເລອາດ [15]ມາກີໄດ້ເອົາເມຍຈາກພວກຮຸບປີມ ແລະ
ຊຸບປີມມາເປັນເມຍ, ເອື້ອຍຂອງລາວຊື່ວ່າ ມາອາກາ ແລະລູກຊາຍຜູ້ທີ່ສອງຊື່ ເຊໂລເຟຂາດ,
ແລະ ເຊໂລເຟຂາດມີແຕ່ລູກສາວ
[16]ແລະ ມາອາກາ ເມຍຂອງ ມາກີໄດ້ເກີດລູກຊາຍຄົນໜຶ່ງ ນາງເອີ້ນຊື່ວ່າ ເປເຣັດ ແລະນ້ອງ
ຊາຍຂອງລາວ ຊື່ເຊເຣັດ ແລະລູກຊາຍຂອງລາວຊື່ ອຸລາມ ແລະຣາເກມ
[17]ລູກຊາຍຂອງ ອຸລາມຊື່ ເບດານ ຈຳນວນຄົນເຫລົ່ານີ້ແມ່ນລູກຫລານ ກີເລອາດຜູ້ເປັນລູກ
ຊາຍ ມາກີລູກຂອງ ມານາເຊ [18]ແລະນາງ ຮຳໂມເລເກັດນ້ອງສາວຂອງລາວກໍໃຫ້ກຳເນີດ ອີ-
ຊະໂຮດ, ອາບີເອເຊ ແລະ ມາລາ
[19]ລູກຊາຍຂອງ ເຊມີດາຄື ອາຮີອານ ເຊເຄັມ, ລີຄີ ແລະ ອານີອາມ

## ຜູ້ສືບເຊື້ອສາຍຂອງເອຟຣາຢິມ

[20]ລູກຊາຍຂອງ ເອຟຣາຢິມຊື່ ຊູເທລາ ແລະລູກຊາຍຂອງຊູເທລາຊື່ ເບເຣັດ ລູກຊາຍຂອງ
ເບເຣັດຊື່ຕາຮາດ ລູກຊາຍຂອງຕາຮາດຊື່ເອເລອາດາ ລູກຊາຍຂອງ ເອເລອາດາຊື່ຕາຮາດ
[21]ລູກຊາຍຂອງຕາຮາດຄື ຊາບາດ ລູກຊາຍຂອງຊາບາດຄືຊູເທລາ ກັບເອເຊ ແລະເອເລ-

ອາດ ຊາວເມືອງກັດຜູ້ທີ່ໄດ້ກຳເນີດໃນເມືອງນັ້ນກໍໄດ້ຂ້າພວກເຂົາ ເພາະພວກເຂົາລົງມາປຸ້ນ
ສັດລ້ຽງຂອງຊາວເມືອງກັດ 22ເອຟຣາຢິມພໍ່ຂອງພວກເຂົາໄດ້ໄວ້ທຸກໂສກເສົ້າຫລາຍມື້ ແລະພີ່-
ນ້ອງຂອງເພິ່ນກໍມາເລົ້າໂລມໃຈເພິ່ນ 23ແລະເອຟຣາຢິມກໍເຂົ້າໄປສົມສູ່ກັບເມຍຂອງເພິ່ນ ນາງ
ກໍຕັ້ງທ້ອງເກີດລູກຊາຍຄົນໜຶ່ງ ເພິ່ນໄດ້ເອີ້ນຊື່ເດັກນັ້ນວ່າ ເບຣີອາ ເພາະລູກໄດ້ເກີດມາໃນເວ-
ລາມີເຫດຮ້າຍໃນຄອບຄົວຂອງຕົນ 24ລູກສາວຂອງເພິ່ນຊື່ເຊເອຣາ ນາງໄດ້ກໍ່ສ້າງເບັດ-ໂຮ-
ໂຣນເມືອງໃຕ້ ແລະເມືອງເໜືອ ແລະເມືອງອຸດເຊັນ-ເຊເອຣາ

25ເອຟຣາຢິມມີລູກຊາຍຊື່ເຣຟາ ລູກຊາຍຂອງເຣຟາຄືເຣເຊັບ ລູກຊາຍຂອງເຣເຊັບຄືເຕ-
ລາ ລູກຊາຍຂອງເຕລາ ຄືຕາຮານ 26ລູກຊາຍຂອງຕາຮານຄືລາດານ ລູກຊາຍຂອງລາດານ
ຄືອຳມີຮຸດ ລູກຊາຍຂອງອຳມີຮຸດຄືເອລີຊາມາ 27ລູກຊາຍຂອງເອລີຊາມາຄື ນູນ ລູກຊາຍ
ຂອງນູນຄືໂຢຊວຍ

## ມໍລະດົກຂອງເອຟຣາຢິມ

28ທີ່ດິນທີ່ເປັນມໍລະດົກ ແລະພູມລຳເນົາຂອງພວກເອຟຣາຢິມຄື ເບັດເອນພ້ອມກັບບັນດາ
ຫົວເມືອງ ແລະອານາເຂດ ດ້ານຕາເວັນອອກ ແລະເກເຊດ້ານຕາເວັນຕົກພ້ອມກັບບັນດາຫົວ
ເມືອງ, ເຊເຄັມພ້ອມກັບບັນດາຫົວເມືອງ ແລະອັດຊາ ພ້ອມກັບບັນດາຫົວເມືອງ 29ເຂດແດນ
ຂອງລູກຫລານມານາເຊ ມີເມືອງເບັດ-ເຊອານພ້ອມກັບບັນດາຫົວເມືອງ, ຕາອານັກພ້ອມກັບ
ບັນດາຫົວເມືອງ, ເມກິດໂດພ້ອມກັບບັນດາຫົວເມືອງ, ໂດເຣພ້ອມກັບບັນດາຫົວເມືອງ ລູກ
ຫລານໂຢເຊັບລູກຊາຍອິສຣາເອນ ກໍໄດ້ອາໄສຢູ່ໃນບ່ອນເຫລົ່ານີ້

## ລູກຊາຍຂອງອາເຊ

30ລູກຊາຍຂອງອາເຊຄື ອິມນາ, ອີຊະວາ, ອີຊະວີ, ເບຣີອາ ແລະເສຣານ້ອງສາວຂອງ
ພວກເຂົາ

31ລູກຊາຍຂອງເບຣີອາຄື ເຮເບ ແລະມັນກີເອນ ຜູ້ເປັນພໍ່ຂອງບີຊາອິດ

32ເຮເບເປັນບິດາຂອງຢາຟະເລດ, ໂຊເມ, ໂຮທາມ ແລະຊູອານ້ອງສາວຂອງພວກເຂົາ

33ລູກຊາຍຂອງຢາຟະເລດ ຊື່ ປາສັກ, ບິມຮັນ ແລະອາຊະວາດ ຄົນເຫລົ່ານີ້ເປັນລູກຢາ-
ຟະເລດ

34ລູກຊາຍຂອງເຊເມຄື ໂຣຣະກາ, ເຢຮຸບບາ ແລະອາຣາມ

35ລູກຊາຍຂອງເຮເລັມນ້ອງຊາຍຂອງລາວຄື ໂຊຟາ, ອິມນາ, ເຊເລັດ ແລະອາມານ

36ລູກຊາຍຂອງໂຊຟາຄື ສູອາ, ຮາເນເຟ, ຊູອານ, ເບຣີ, ອິມຣາ 37ເບເສ, ໂຮດ, ຊາມມາ,
ຊິນຊາ, ອິດຣັນ ແລະເບເອຣາ

38ລູກຊາຍຂອງເຢເທຄື ເຢຟຸນເນ, ປີຊະປາ ແລະອາຣາ

39ລູກຊາຍຂອງອູນລານັນຄື ອາຣາ, ຮານນີເອນ ແລະຣີຊີຢາ

40ທັງໝົດເຫລົ່ານີ້ແມ່ນລູກຫລານຂອງອາເຊ ຫົວໜ້າໃນຄອບຄົວບັນພະບູລຸດຂອງພວກເຂົາ,
ເປັນຄົນແຂງແຮງອົງອາດກ້າຫານ ເປັນເຈົ້ານາຍໃຫຍ່ ແລະ ໄດ້ຂຶ້ນທະບຽນໄວ້ໃນສຳມະໂນ
ຄົວເຊື້ອສາຍສຳລັບກອງທັບທະຫານໄດ້ສອງໝື່ນຫົກພັນຄົນ

# ບົດທີ 8

## ລູກຊາຍ ແລະຫົວໜ້າເຜົ່າເບັນຢາມິນ
## (ເຊື້ອສາຍຂອງເບັນຢາມິນ)

1ເບັນຢາມິນ ໃຫ້ກຳເນີດ ເບລາ ລູກຫົວປີ, ອາຊະເບັນ ເປັນຄົນທີສອງ, ອາຣາຣາ ເປັນຄົນທີ
ສາມ 2ໂນຮາ ຄົນທີສີ່, ຣາຟາ ຄົນທີຫ້າ

3ແລະລູກຊາຍຂອງ ເບລາ ຄື ອັດດາ, ເກຣະ, ອາບີຮູດ 4ອາບີຊູອາ, ນາອາມານ, ອາໂຮອາ
5ເກຣະ, ເຊຟູຟານ ແລະ ຮູຣາມ

6ຕໍ່ໄປນີ້ເປັນລູກຊາຍຂອງ ເອຮຸດ ຊຶ່ງພວກເຂົາເປັນຫົວໜ້າບັນພະບູລຸດຂອງຊາວເມືອງ ເກ-
ບາ ແລະພວກເຂົາໄດ້ຖືກກວາດໄປເປັນຊະເລີຍໃນເມືອງ ມານາຮາດ 7ມີ ຄືດັ່ງນີ້ ນາອາມານ,
ອາຮີຢາ ແລະ ເກຣະ ພວກເຂົາໄດ້ຖືກກວາດໄປເປັນຊະເລີຍ ແລະໄດ້ລູກຊື່ ອຸດຊາ ແລະ ອາ-
ຮີຮູດ

8ຊາຮາຣາຢິມ ໄດ້ລູກໃນດິນແດນ ໂມອາບ ຫລັງຈາກທີ່ລາວໄດ້ປະຮ້າງ ຮູຊິມ ແລະ ບາອາຣາ
ເມຍຂອງລາວໄປແລ້ວ 9ແລະລາວໄດ້ລູກກັບນາງ ໂຮເດັດ ເມຍຂອງລາວຄື ໂຢບັບ, ຊີບີຢາ
ແລະ ເມຊາ, 10ມັນການ, ເຢອູດ, ຊາເຄຍ ແລະ ມີຣະມາ ຄົນເຫລົ່ານີ້ເປັນລູກຊາຍຂອງຊາ-
ຮາຣາຢິມ ຊຶ່ງເປັນຫົວໜ້າ ບັນພະບູລຸດຂອງພວກເຂົາ 11ລາວໄດ້ລູກກັບນາງ ຮູຊິມ ເໝືອນກັນຄື
ອາບີຕຸບ ແລະ ເອນປາອານ

12ລູກຊາຍຂອງ ເອນປາອານ ຄື ເຣເບ, ມີຊາມ ແລະ ເຊເມັດ (ຜູ້ນີ້ໄດ້ສ້າງເມືອງ ໂອໂນ
ແລະເມືອງ ໂລດ ພ້ອມກັບ ເຂດຕ່າງໆນອກເມືອງ) 13ເບຣີອາ ແລະ ເຊມາ ພວກເຂົາເປັນຫົວ-
ໜ້າບັນພະບູລຸດຂອງຊາວ ເມືອງ ອາຢາໂລນ ແມ່ນພວກນີ້ເອງທີ່ໄດ້ຂັບໄລ່ຊາວ ເມືອງ ກັດ ໃຫ້ໜີ
ໄປ

14ແລະ ອາຮີໂອ, ຊາຊັກ ແລະ ເຢເຣໂມດ 15ເຊບາດີຢາ, ອາຣັດ, ເອເດ 16ມີກາເອນ, ອີ-
ຊະປາ ແລະ ໂຢຮາ ຊຶ່ງເປັນລູກຊາຍຂອງ ເບຣີອາ

17ເຊບາດີຢາ, ເມຊຸນລຳ, ຮິດຊະກີ, ເຮເບ 18ອີຊະເມຣາຍ, ອີດຊະລີຢາ ແລະ ໂຢບັບ ເປັນ
ລູກຊາຍຂອງ ເອນປາອານ

19ຢາກີມ, ຊິກຣີ, ຊັບດີ 20ເອລີເອນາຍ, ຊິນເລທາຍ, ເອລີເອນ 21ອາດາຢາ, ເບຣາຢາ
ແລະຊິມຣາດ ເປັນລູກຊາຍຂອງຊີເມອີ

22ອີຊະປັນ, ເຮເບ, ເອລີເອນ 23ອັບໂດນ, ຊິກຣີ, ຮານານ 24ຮານານີຢາ, ເອລາມ, ອັນ-
ໂທທີຢາ 25ອີບເດຢາ ແລະ ເປນູເອນຜູ້ເປັນລູກຊາຍຂອງຊາຊັກ

26ຊາມເຊຣາຍ, ເຊຮາຣີຢາ, ອາທາລີຢາ 27ຢາອາເຣຊີຢາ, ເອລີຢາ ແລະຊິກຣີ ເປັນລູກ
ຊາຍຂອງ ເຢໂຣຣາມ 28ຄົນເຫລົ່ານີ້ເປັນຫົວໜ້າບັນພະບູລຸດຂອງພວກເຂົາ ຕາມເຊື້ອສາຍຂອງ
ພວກເຂົາ ເປັນຊັ້ນຫົວໜ້າ ຄົນເຫລົ່ານີ້ຢູ່ໃນ ເຢຣູຊາເລັມ

29ແລະພໍ່ຂອງ ກິເບໂອນ ກໍໄດ້ອາໄສຢູ່ໃນເມືອງ ກິເບໂອນ ພ້ອມກັບເມຍຂອງ ເພິ່ນຊື່ ມາອາກາ
30ລູກຊາຍຫົວປີຂອງເພິ່ນຊື່ ອັບໂດນ ແລ້ວກໍມີ ຊູເຣ, ກີເຊ, ບາອານ, ນາດາບ 31ເກໂດເຣ,

ອາຣີໂອ, ເຊເກ
[32]ແລະ ມີກໂລດ (ເປັນພໍ່ຂອງຊີເມອາ) ຄົນເຫລົ່ານີ້ໄດ້ ອາໄສຢູ່ຟາກກົງກັນຂ້າມກັບຍາດພີ່-
ນ້ອງຂອງພວກເຂົາ ໃນ ເຢຣູຊາເລັມ ເໝືອນກັນ ໂດຍທີ່ພວກເຂົາອາໄສຢູ່ກັບພວກພີ່ນ້ອງຂອງ
ພວກເຂົາ

## ເຊື້ອສາຍຂອງຊາອູນ

[33]ເນ ເປັນບິດາຂອງ ກີເຊ, ກີເຊ ເປັນບິດາຂອງ ຊາອູນ ຊາອູນ ເປັນບິດາຂອງ ໂຢນາທານ,
ມັນກີຊົວ, ອາບີນາດາບ ແລະ ເອຊະບາອານ
[34]ແລະລູກຊາຍຂອງ ໂຢນາທານຄື ເມຣິບ-ບາອານ ແລະ ເມຣິບ-ບາອານ ເປັນບິດາຂອງ ມີ-
ກາ
[35]ລູກຊາຍຂອງ ມີກາຄື ປີໂທນ, ເມເລັກ, ຕາເຣອາ ແລະອາຮາດ
[36]ແລະ ອາຮາດ ເປັນບິດາຂອງ ເຢໂຮອາດດາ ແລະ ເຢໂຮອາດດາ ເປັນບິດາຂອງ ອາເລ-
ເມດ, ອາຊະມາເວດ ແລະຊິມຣີ; ຊິມຣີ ເປັນບິດາຂອງ ໂມຊາ [37]ໂມຊາ ເປັນບິດາຂອງ ບີເນອາ;
ລູກຊາຍຂອງ ບີເນອາຄື ຣາຟາ ລູກຊາຍຂອງລາຟາຄື ເອເລອາສາ ລູກຊາຍຂອງ ເອເລອາສາ
ຄື ອາເຊນ
[38]ອາເຊນ ມີລູກຊາຍຫົກຄົນ ແລະຕໍ່ໄປນີ້ແມ່ນຊື່ຂອງພວກເຂົາຄື ອັດຊະຣີການ, ໂບເກຣູ,
ອິດຊະມາເອນ, ເຊອາຣີຢາ ໂອບາດີຢາ ແລະ ຮານານ ທັງໝົດນີ້ເປັນພວກລູກຊາຍຂອງອາ
ນຳ
[39]ແລະພວກລູກຊາຍຂອງ ເອເຊັກ ນ້ອງຊາຍຂອງ ເພິ່ນຄື ອຸລາມ ລູກກົກ, ເຢອຸດ ຜູ້ທີສອງ
ແລະ ເອລີເຟເລັດ ເປັນຜູ້ທີສາມ [40]ລູກຊາຍຂອງ ອຸລາມ ເປັນທະຫານທີ່ເກັ່ງກ້າ ແລະນັກຍິງ
ທະນູທີ່ຊຳນານ ແລະມີລູກຫລານຫລາຍກວ່າໜຶ່ງຮ້ອຍຫ້າສິບຄົນ ຄົນທັງໝົດເຫລົ່ານີ້ເປັນລູກ
ຫລານຂອງ ເບັນຢາມິນ

# ບົດທີ 9

## ສຳມະໂນຄົວຂອງເຊື້ອສາຍອິສຣາເອນ ແລະຢູດາ

[1]ຊາວ ອິສຣາເອນ ທັງໝົດໄດ້ຂຶ້ນທະບຽນສຳມະໂນຄົວໄວ້ຕາມບັນດາເຊື້ອສາຍ ແລະເບິ່ງແມ
ທະບຽນສຳມະໂນນີ້ກໍຖືກບັນທຶກໄວ້ໃນໜັງສືຂອງກະສັດແຫ່ງ ອິສຣາເອນ, ແລະ ຢູດາ ຜູ້ຖືກ
ກວາດໄປເປັນຊະເລີຍໃນ ບາບີໂລນ ເພາະການບາບຂອງພວກເຂົາ [2]ພວກທຳອິດທີ່ເຂົ້າມາອາ-
ໄສໃນບັນດາຫົວເມືອງຕ່າງໆທີ່ເປັນກຳມະສິດຂອງພວກເຂົານັ້ນ ຄື ຊາວ ອິສຣາເອນ ພວກ
ປະໂລຫິດ, ພວກ ເລວີ ແລະພວກຜູ້ຮັບໃຊ້ປະຈຳພຣະວິຫານ [3]ແລະໃນ ເມືອງ ເຢຣູຊາເລັມ ມີ
ປະຊາຊົນບາງຄົນຈາກພວກ ຢູດາ, ພວກ ເບັນຢາມິນ, ພວກ ເອຟຣາຢິມ ແລະພວກ ມານາເຊ
ໄດ້ອາໄສຢູ່
[4]ຄື ອຸທາຍ ເປັນລູກຊາຍ ອຳມີຮຸດ, ເປັນລູກຊາຍ ອົມຣີ, ເປັນລູກຊາຍ ອິມຣີ, ເປັນລູກຊາຍ
ບານີ ຈາກພວກລູກ ເປເຣັດ ຜູ້ເປັນລູກຢູດາ

5ແລະຈາກພວກຊີໂລຄື ອາສາຢາລູກຫົວປີ ແລະບັນດາລູກຊາຍຂອງລາວ
6ຈາກພວກລູກຊາຍຂອງ ເຊຣາຄື ເຢອູເອນ ແລະພີ່ນ້ອງຂອງລາວຫົກຮ້ອຍເກົ້າສິບຄົນ
7ຈາກພວກລູກຫລານຂອງ ເບັນຢາມິນຄື ສັນລູຜູ້ເປັນລູກຊາຍ ເມຊຸນລຳ, ເປັນລູກຊາຍ ໂຮ-
ດາວິຢາ, ເປັນລູກຊາຍ ຮັດເສນູອາ 8ແລະອິບເນຢາລູກຊາຍ ເຢໂຣຮາມ, ເອລາລູກຊາຍອຸດຊີ,
ອຸດຊີເປັນລູກຊາຍ ມິກຣີ ແລະ ເມຊຸນລຳ, ເມຊຸນລຳລູກຊາຍ ເຊຟາຕີຢາ, ເປັນລູກຊາຍ ເຣອູ-
ເອນ, ເປັນລູກຊາຍ ອິບນີຢາ
9ແລະບັນດາພີ່ນ້ອງອີງຕາມເຊື້ອສາຍຂອງພວກເຂົາເປັນເກົ້າຮ້ອຍຫ້າສິບຫົກຄົນ ທັງໝົດນີ້
ເປັນຫົວໜ້າຂອງບັນພະບູລຸດຕາມຄອບຄົວບັນພະບູລຸດຂອງພວກເຂົາ

## ບັນດາປະໂລຫິດໃຫຍ່

10ຈາກບັນດາປະໂລຫິດນັ້ນມີ ເຢດາຢາ, ເຢໂຮຢາຣິບ, ຢາກິນ, 11ແລະອາຊາຣີຢາ ຜູ້ເປັນ
ລູກຊາຍຮິນກີຢາ, ເປັນລູກຊາຍ ເມຊຸນລຳ, ເປັນລູກຊາຍຊາໂດກ, ເປັນລູກຊາຍ ເມຣາໂຢດ,
ເປັນລູກຊາຍອາຮີຕຸບ ຊຶ່ງເປັນເຈົ້າໜ້າທີ່ປົກຄອງຂອງພຣະວິຫານຂອງ ພຣະເຈົ້າ 12ແລະອາດາ-
ຢາຜູ້ເປັນລູກຊາຍ ເຢໂຣຮາມ, ເປັນລູກຊາຍປັດຊູ, ເປັນລູກຊາຍ ມັນກີຢາ ແລະມາອາໄສ,
ເປັນລູກຊາຍອາດີເອນ, ເປັນລູກຊາຍຢາເຊຣາຜູ້ເປັນລູກຊາຍ ເມຊຸນລຳ, ເປັນລູກຊາຍ ເມຊິນ-
ເລມິດ, ເປັນລູກຊາຍອິມເມ
13ແລະຍາດພີ່ນ້ອງທີ່ເປັນຫົວໜ້າຄອບຄົວບັນພະບູລຸດຂອງພວກເຂົາລວມມີໜຶ່ງພັນເຈັດຮ້ອຍ
ຫົກສິບຄົນເປັນຄົນທີ່ເກັ່ງກ້າສາມາດຫລາຍ ເພື່ອເຮັດວຽກບົວລະບັດໃນພຣະວິຫານຂອງ ພຣະ-
ເຈົ້າ

## ຄົນເລວີອາໄສຢູ່ໃນນະຄອນເຢຣູຊາເລັມ

14ຈາກພວກ ເລວີມີ ເຊມາຢາຜູ້ເປັນລູກຊາຍຮັດຊຸບ, ເປັນລູກຊາຍອັດຊະຣິການ, ເປັນລູກ
ຊາຍຮາຊາບີຢາ ລູກຫລານຂອງ ເມຣາຣີ 15ແລະບັກບັກກາ, ເຮເຣັດ, ກາລັນ ແລະມັດຕານີ-
ຢາ ຜູ້ເປັນລູກຊາຍມີກາ, ເປັນລູກຊາຍຊິກຣີ, ເປັນລູກຊາຍ ອາສັບ 16ແລະໂອບາດີຢາຜູ້ເປັນ
ລູກຊາຍ ເຊມາຢາ, ເປັນລູກຊາຍ ກາລັນ, ເປັນລູກຊາຍ ເຢດູທູນ ແລະເບເຣກີຢາ, ຜູ້ເປັນລູກ
ຊາຍອາຊາ, ເປັນລູກຊາຍເອນການາ ພວກທີ່ອາໄສຢູ່ໃນຊົນນະບົດຂອງຊາວ ເນໂຕຟາ
17ແລະພວກຜູ້ເຝົ້າປະຕູຄືຊານລູມ, ອັກກຸບ, ຕັນໂມນ, ອາຮີມານ ແລະພີ່ນ້ອງຂອງພວກ
ເຂົາ ຊານລູມເປັນຫົວໜ້າ 18ພວກເຂົາປະຈຳຢູ່ຈົນເຖິງດຽວນີ້ທີ່ປະຕູຂອງກະສັດທາງດ້ານຕາ-
ເວັນອອກ ແຕ່ກ່ອນຄົນເຫລົ່ານີ້ເປັນຜູ້ເຝົ້າປະຕູ ຄ້າຍຂອງພວກລູກຫລານ ເລວີ
19ຊານລູມເປັນລູກຊາຍໂກເຣ, ເປັນລູກຊາຍ ເອບີອາສັບ, ເປັນລູກຊາຍ ໂກຣາ, ແລະພີ່ນ້ອງ
ຂອງພວກເຂົາຈາກຄອບຄົວບັນພະບູລຸດຂອງພວກເຂົາຄື ຄົນ ໂກຣາ ຊຶ່ງເປັນຜູ້ເບິ່ງແຍງການ
ງານໃນການບົວລະບັດ, ເປັນຜູ້ເຝົ້າຍາມປະຕູຫໍເຕັນເໝືອນກັບບັນພະບູລຸດຂອງພວກເຂົາ ແລະ
ເປັນຜູ້ເບິ່ງແຍງຄ້າຍຂອງ ພຣະຜູ້ເປັນເຈົ້າ ແລະທາງເຂົ້າ 20ແລະ ຟີເນຮາດ ລູກຊາຍ ເອເລອາ-
ຊາ ເປັນຜູ້ປົກຄອງພວກເຂົາໃນຄາວກ່ອນ ພຣະຜູ້ເປັນເຈົ້າໄດ້ສະຖິດຢູ່ກັບພວກເຂົາ 21ເຊຄາ-
ຣີຢາ ລູກຊາຍ ເມເຊເລມີຢາ ເປັນຜູ້ເຝົ້າທາງເຂົ້າປະຕູຫໍເຕັນແຫ່ງຊຸມນຸມ

[22]ພວກທີ່ຖືກເລືອກໃຫ້ເປັນຜູ້ເຝົ້າປະຕູນັ້ນມີສອງຮ້ອຍສິບສອງຄົນ ພວກເຂົາໄດ້ຂຶ້ນທະບຽນ
ສຳມະໂນຄົວເຊື້ອສາຍໄວ້ໃນບ້ານຂອງພວກເຂົາ; ກະສັດດາວິດ ແລະຊາມູເອນຜູ້ທຳນວາຍ
ໄດ້ສະຖາປະນາພວກເຂົາໄວ້ໃນຕຳແໜ່ງ ໜ້າທີ່ນັ້ນແລ້ວ [23]ດັ່ງນັ້ນ ພວກເຂົາ ແລະລູກຫລານ
ຂອງພວກເຂົາຈຶ່ງເປັນຜູ້ເບິ່ງແຍງປະຕູຮົ້ວພຣະວິຫານຂອງພຣະຜູ້ເປັນເຈົ້າ ແລະເປັນຜູ້ເຝົ້າຍາມ
ປະຕູຮົ້ວພຣະວິຫານຂອງຫໍເຕັນ [24]ພວກຜູ້ເຝົ້າຍາມປະຕູຮົ້ວກໍຢູ່ທັງສີ່ທິດຄືທິດຕາເວັນອອກ,
ທິດຕາເວັນຕົກ, ທິດເໜືອ ແລະທິດໃຕ້ [25]ແລະພີ່ນ້ອງຂອງພວກເຂົາທີ່ຢູ່ໃນຊົນນະບົດຂອງ
ພວກເຂົານັ້ນ ຕ້ອງເຂົ້າມາທຸກໆເຈັດມື້ຕາມເວລາກຳນົດ ເພື່ອ ຈະຢູ່ກັບຄົນເຫລົ່ານີ້

## ໜ້າທີ່ສຳຄັນຂອງຄົນເລວີບາງຄົນ

[26]ເພາະສີ່ທ່ານນີ້ເປັນຜູ້ໃຫຍ່ໃນໜ້າທີ່ການເຝົ້າປະຕູຮົ້ວທີ່ເປັນຊາວເລວີ, ມີຕຳແໜ່ງໜ້າທີ່
ເປັນຜູ້ເບິ່ງແຍງ ຫ້ອງ ແລະຄັງຂອງພຣະວິຫານຂອງພຣະເຈົ້າ [27]ແລະພວກເພິ່ນໄດ້ເຝົ້າຢູ່ອ້ອມ
ຮອບພຣະວິຫານຂອງພຣະເຈົ້າໃນເວລາກາງຄືນ ເພາະໜ້າທີ່ເຝົ້າຮັກສາໄດ້ຕົກຢູ່ກັບພວກເພິ່ນ
ແລະພວກເພິ່ນຖືກຸນແຈຊຶ່ງມີໜ້າທີ່ໄຂປະຕູໃນທຸກໆເຊົ້າ [28]ບາງຄົນເປັນຄົນປະຈຳການເບິ່ງແຍງ
ເຄື່ອງໃຊ້ໃນການບົວລະບັດ ເພາະວ່າຈະເບີກອອກໄປ ຫລືຮັບເຂົ້າມາຕ້ອງນັບທຸກເທື່ອ [29]ແລະ
ບາງຄົນຖືກແຕ່ງຕັ້ງໃຫ້ເບິ່ງແຍງຮັກສາເຄື່ອງໃຊ້ທົ່ວໄປ ແລະເບິ່ງແຍງເຄື່ອງໃຊ້ຂອງສະຖານທີ່
ບໍລິສຸດທັງໝົດ ເບິ່ງແຍງເຂົ້າແປ້ງທີ່ລະອຽດ, ນ້ຳອະງຸ່ນ, ນ້ຳມັນ, ກຳຍານ ແລະເຄື່ອງຫອມ
ຕ່າງໆ [30]ແລະບາງຄົນຊຶ່ງເປັນລູກຊາຍຂອງປະໂລຫິດກໍຕຽມເຄື່ອງຫອມຕ່າງໆປະສົມກັນເຮັດ
ນ້ຳມັນຫອມ [31]ມັດຕີທີຢາຄົນເລວີຄົນໜຶ່ງ ຜູ້ເປັນລູກຫົວປີຂອງຊານລູມຄົນໂກຣາ ເປັນຜູ້ປະ-
ຈຳການເຮັດເຂົ້າໜົມປີ້ງເທິງແຜ່ນ [32]ແລະພີ່ນ້ອງຂອງພວກເຂົາບາງຄົນຊຶ່ງເປັນຄົນໂກຣາດ,
ເປັນຜູ້ເບິ່ງແຍງເຂົ້າຈີ່ທີ່ຢູ່ໜ້າພຣະພັກ ມີໜ້າທີ່ຈັດຕຽມໃນທຸກວັນສະບາໂຕ

[33]ຕໍ່ໄປນີ້ເປັນພວກນັກຮ້ອງທີ່ເປັນຫົວໜ້າຂອງບັນພະບູລຸດພວກເລວີຜູ້ທີ່ອາໄສຢູ່ໃນຫ້ອງໃນ
ພຣະວິຫານໂດຍບໍ່ຕ້ອງເຮັດການບົວລະບັດຢ່າງອື່ນ ເພາະພວກເຂົາຢູ່ເວນຍາມທັງກາງເວັນ
ແລະກາງຄືນ [34]ຄົນເຫລົ່ານີ້ແມ່ນບັນດາຫົວໜ້າຂອງຄົນເລວີ ຕາມເຊື້ອສາຍຂອງພວກເຂົາເປັນ
ຫົວໜ້າຊຶ່ງອາໄສຢູ່ທີ່ເຢຣູຊາເລັມ

## ເຊື້ອສາຍຂອງຊາອູນ

[35]ໃນເມືອງກິເບໂອນນັ້ນ ເຢອີເອນພໍ່ຂອງກິເບໂອນອາໄສຢູ່ ພ້ອມກັບເມຍຂອງເພິ່ນຊື່ມາ-
ອາກາ [36]ແລະລູກຊາຍກົກຂອງເພິ່ນຊື່ອັບໂດນ, ແລະຊູເຣ ກີເຊ, ບາອານ, ເນ ແລະນາດາບ
[37]ແລະເກໂດເຣ, ອາຮີໂອ, ເຊຄາຣີຢາ ແລະມິກໂລດ [38]ມິກໂລດໄດ້ລູກຊື່ຊີເມອາມ, ຄົນ
ເຫລົ່ານີ້ໄດ້ອາໄສຢູ່ໃກ້ພວກພີ່ນ້ອງຂອງພວກເຂົາໃນເມືອງເຢຣູຊາເລັມຊຶ່ງຢູ່ນຳກັນກັບພີ່ນ້ອງ
ຂອງພວກເຂົາ

[39]ເນເປັນບິດາຂອງກີເຊ, ກີເຊເປັນບິດາຂອງຊາອູນ ຊາອູນເປັນບິດາຂອງໂຢນາທານ,
ມັນກີຊົວ, ອາບີນາດາບ ແລະເອຊະບາອານ

[40]ລູກຊາຍຂອງໂຢນາທານຊື່ເມຣິບ-ບາອານ ແລະເມຣິບ-ບາອານເປັນບິດາຂອງມີກາ

[41]ລູກຊາຍຂອງມີກາຄື ປີໂທນ, ເມເລັກ, ຕາເຣອາ ແລະອາຮາດ

[42]ອາຣາດ ເປັນບິດາຂອງ ຢາຣາ ແລະ ຢາຣາ ເປັນບິດາຂອງ ອາເລເມດ, ອາຊະມາເວດ
ແລະຊິມຣີ ແລະຊິມຣີ ເປັນບິດາຂອງ ໂມຊາ [43]ໂມຊາ ເປັນບິດາຂອງ ບີເນອາ ແລະລູກຊາຍ
ຂອງ ບີເນອາ ຄື ເຣຟາຢາ ລູກຊາຍຂອງ ເຣຟາຢາ ຄື ເອເລອາສາ ລູກຊາຍຂອງ ເອເລອາສາ ຄື
ອາເຊນ

[44]ອາເຊນ ມີລູກຊາຍຫົກຄົນ ແລະຕໍ່ໄປນີ້ເປັນຊື່ຂອງພວກເຂົາຄື ອັດຊະຣີກາມ, ໂບເກຣູ,
ອິດຊະມາເອນ, ເຊອາຣີຢາ, ໂອບາດີຢາ ແລະຮານານ ຄົນເຫລົ່ານີ້ເປັນລູກຊາຍຂອງ ອາເຊນ

# ບົດທີ 10

## ຊາອູນພ່າຍແພ້ ແລະຖືກຂ້າ[ກ]

[1]ຄົນ ຟີລິດສະຕິນ ໄດ້ສູ້ຮົບກັບຄົນ ອິສຣາເອນ ແລະຄົນ ອິສຣາເອນ ໄດ້ປົບໜີຕໍ່ໜ້າຄົນ ຟີລິດ-
ສະຕິນ ແລະໄດ້ລົ້ມຕາຍຢູ່ເທິງພູເຂົາ ກິນໂບອາ [2]ພວກ ຟີລິດສະຕິນ ໄດ້ໄລ່ທັນ ຊາອູນ ກັບພວກ
ລູກຊາຍ ແລະຄົນ ຟີລິດສະຕິນ ໄດ້ຂ້າ ໂຢນາທານ, ອາບີນາດາບ ແລະ ມັນກີຊົວ ລູກຊາຍຂອງ
ຊາອູນ [3]ການສູ້ຮົບຂອງຊາອູນ ດຸເດືອດຫລາຍ ແລະນັກຍິງທະນູໄດ້ມາເຖິງພະອົງ ພະອົງບາດ-
ເຈັບສາຫັດດ້ວຍສີມື ຂອງນັກຍິງທະນູ [4]ແລ້ວຊາອູນ ສັ່ງຄົນທີ່ຖືອາວຸດຂອງພະອົງວ່າ “ຈົ່ງຖອດ
ດາບອອກ ແທງ ເຮົາ ໃຫ້ຊອດ ເຖີດ ຢ້ານວ່າຄົນທີ່ບໍ່ ໄດ້ຮັບພິທີຕັດ ເຫລົ່ານີ້ຈະ ເຂົ້າມາ ແທງ ເຮົາ
ແລະປະຈານຂາຍໜ້າເຮົາ” ແຕ່ຜູ້ຖືອາວຸດບໍ່ຍອມເຮັດຕາມເພາະລາວຢ້ານຫລາຍ ຊາອູນ ຈຶ່ງໄດ້
ຖອດດາບຂອງພະອົງອອກແລະລົ້ມທັບປາຍດາບນັ້ນ [5]ເມື່ອຜູ້ຖືອາວຸດເຫັນວ່າຊາອູນ ສິ້ນພະຊົນ
ແລ້ວ ລາວກໍລົ້ມທັບດາບຂອງລາວຕາຍນຳກັນ [6]ດັ່ງນັ້ນ ຊາອູນ ໄດ້ສິ້ນພະຊົນພ້ອມກັບລູກຊາຍ
ທັງສາມຂອງພະອົງ ແລະຄອບຄົວທັງໝົດຂອງພະອົງກໍຕາຍໄປພ້ອມກັນ [7]ເມື່ອບັນດາຊາວ ອິ-
ສຣາເອນ ທີ່ຢູ່ໃນຮ່ອມພູເຫັນວ່າກອງທັບປົບໜີໄປ ແລະ ຊາອູນ ພ້ອມລູກຊາຍຂອງພະອົງກໍສິ້ນ
ພະຊົນແລ້ວ ພວກເຂົາກໍປະຖິ້ມບ້ານເມືອງຂອງພວກເຂົາ ແລະຫລົບໜີໄປ ພວກ ຟີລິດສະຕິນ ກໍ
ເຂົ້າມາອາໄສຢູ່ໃນບ່ອນນັ້ນ

## ຄົນຟີລິດສະຕິນສະຫລອງການສິ້ນພະຊົນຂອງຊາອູນ

[8]ຢູ່ມາໃນເຊົ້າມື້ໃໝ່ ເມື່ອຄົນ ຟີລິດສະຕິນ ມາຖອດເອົາສິ່ງຂອງຈາກຄົນທີ່ຖືກຂ້າ ພວກເຂົາກໍ
ໄດ້ພົບສົບຂອງ ຊາອູນ ແລະ ລູກຊາຍທັງສາມຢູ່ເທິງພູເຂົາ ກິນໂບອາ [9]ພວກເຂົາກໍຖອດເອົາ
ເຄື່ອງ ແລະເອົາຫົວພ້ອມກັບອາວຸດຂອງພະອົງໄປ ແລະສົ່ງຜູ້ສົ່ງຂ່າວໄປທົ່ວດິນແດນ ຟີລິດສະ-
ຕິນ ໃຫ້ນຳຂ່າວດີໄປເຖິງຮູບເຄົາລົບທັງຫລາຍແລະປະຊາຊົນຂອງພວກເຂົາ [10]ພວກເຂົາເອົາ
ເຄື່ອງອາວຸດຂອງພະອົງໄປວາງໄວ້ໃນວິຫານຮູບພະຂອງພວກເຂົາ ແລະເອົາເຫລັກຕະປູຕອກ
ໃສ່ຫົວຂອງພະອົງຕິດໄວ້ໃນວິຫານຂອງພະ ດາໂກນ [11]ເມື່ອຄົນທັງຫລາຍ ໃນ ເມືອງ ຢາເບັດ
ແຂວງ ກີເລອາດ ໄດ້ຍິນເລື່ອງທັງໝົດທີ່ຄົນ ຟີລິດສະຕິນ ໄດ້ເຮັດແກ່ຊາອູນ [12]ທະຫານທີ່ເກັ່ງກ້າ
ທັງໝົດກໍໄດ້ລຸກຂຶ້ນໄປເອົາສົບຂອງ ຊາອູນ ແລະຊາກສົບຂອງພວກລູກຊາຍຂອງພະອົງ ໂດຍ
ນຳມາໄວ້ທີ່ ຢາເບັດ ແລະ ໄດ້ຝັງກະດູກຂອງພວກເພິ່ນຢູ່ກ້ອງຕົ້ນໂອກໃນຢາເບັດ ແລະໄດ້

[ກ]1 ຊາມູເອນ 31:1-13

ພາກັນອົດອາຫານເຈັດມື້

## ຄວາມບາບຂອງຊາອູນເຮັດໃຫ້ພະອົງເສຍລາຊະອານາຈັກ

13ຊາອູນ ໄດ້ຕາຍ ໃນຄວາມບາບທີ່ພະອົງໄດ້ເຮັດຕໍ່ ພຣະຜູ້ເປັນເຈົ້າ ຍ້ອນພະອົງບໍ່ໄດ້ຮັກສາ
ພຣະຄຳຂອງ ພຣະຜູ້ເປັນເຈົ້າ ແລະອີກບັນຫາໜຶ່ງ ຍ້ອນພະອົງຊອກຫາການນຳໂດຍໄປປຶກສາ
ກັບຄົນເຂົ້າຊົງ 14ແລະບໍ່ໄດ້ຊອກຫາການຊີ້ນຳຈາກ ພຣະຜູ້ເປັນເຈົ້າ, ພຣະຜູ້ເປັນເຈົ້າຈຶ່ງໄດ້
ສັງຫານພະອົງ ແລະໄດ້ຍົກລາຊະອານາຈັກໃຫ້ແກ່ດາວິດລູກຊາຍຂອງ ເຢຊີ

# ບົດທີ 11

## ດາວິດໄດ້ຮັບການເຈີມໃຫ້ເປັນກະສັດປົກຄອງອິສຣາເອນ[ກ]

1ແລ້ວຄົນ ອິສຣາເອນ ທັງໝົດກໍຊຸມນຸມກັນເພື່ອເຂົ້າເຝົ້າ ດາວິດ ທີ່ເມືອງ ເຮັບໂຣນ ທູນວ່າ “ເບິ່ງ
ແມ ຂ້າພະອົງທັງຫລາຍເປັນກະດູກ ແລະເນື້ອໜັງຂອງພະອົງ 2ໃນເວລາກ່ອນ ເມື່ອຊາອູນ
ເປັນກະສັດ ພະອົງໄດ້ເປັນຜູ້ນຳຊາວ ອິສຣາເອນ ທີ່ຈະອອກໄປ ແລະເຂົ້າມາ ແລະ ພຣະຜູ້-
ເປັນເຈົ້າ ພຣະເຈົ້າຂອງພະອົງກ່າວແກ່ພະອົງວ່າ ‘ເຈົ້າຈະລ້ຽງດູ ອິສຣາເອນ ປະຊາຊົນຂອງເຮົາ
ແລະ ເຈົ້າຈະ ເປັນ ເຈົ້ານາຍປົກຄອງ ອິສຣາເອນ ປະຊາຊົນຂອງ ເຮົາ’” 3ດັ່ງນັ້ນ ພວກຜູ້ໃຫຍ່ທັງ
ໝົດຂອງຄົນ ອິສຣາເອນ ກໍ ໄດ້ ເຂົ້າ ເຝົ້າກະສັດທີ່ ເມືອງ ເຮັບໂຣນ ແລະ ດາວິດ ໄດ້ ເຮັດຄຳໝັ້ນ
ສັນຍາກັບພວກ ເຂົາທີ່ ເມືອງ ເຮັບໂຣນ ຕໍ່ພຣະພັກ ພຣະຜູ້ເປັນເຈົ້າ ແລະພວກ ເຂົາກໍເຈີມ ດາວິດ
ໃຫ້ເປັນກະສັດປົກຄອງ ອິສຣາເອນ ຕາມພຣະທຳຂອງ ພຣະຜູ້ເປັນເຈົ້າ ໂດຍຜ່ານ ຊາມູເອນ

## ເມືອງເຢຣູຊາເລັມກາຍເປັນເມືອງຫລວງ[ຂ]

4ດາວິດ ແລະຄົນ ອິສຣາເອນ ທັງໝົດໄດ້ໄປ ເຢຣູຊາເລັມ ໂດຍໄປທີ່ ເຢບຸດ ຊຶ່ງບ່ອນນັ້ນຄົນ
ເຢບຸດ ອາໃສຢູ່ແລະແມ່ນປະຊາຊົນຂອງປະເທດນັ້ນ 5ຊາວເມືອງ ເຢບຸດ ທູນ ດາວິດ ວ່າ “ພະອົງ
ຈະສະເດັດເຂົ້າມາບ່ອນນີ້ບໍ່ໄດ້” ຢ່າງໃດກໍດີ ດາວິດ ໄດ້ຍຶດເອົາປ້ອມເມືອງ ຊີໂອນ ໄວ້ຄື ເມືອງ
ຂອງ ດາວິດ 6ແລະ ດາວິດ ກ່າວວ່າ “ຖ້າຜູ້ໃດໂຈມຕີຊະນະຄົນ ເຢບຸດ ໄດ້ກ່ອນໝູ່ຈະໄດ້ເປັນຫົວ-
ໜ້າ ແລະຜູ້ບັງຄັບບັນຊາ” ແລະ ໂຢອາບ ລູກຊາຍຂອງນາງ ເຊຣູຢາ ໄດ້ລຸກຂຶ້ນໄປກ່ອນ ລາວຈຶ່ງ
ໄດ້ເປັນຫົວໜ້າ 7ດາວິດ ໄດ້ຢູ່ໃນທີ່ປ້ອມອັນເຂັ້ມແຂງ ເພາະສະນັ້ນພວກເຂົາຈຶ່ງໃຫ້ຊື່ບ່ອນນັ້ນ
ວ່າເມືອງຂອງ ດາວິດ 8ແລະພະອົງໄດ້ກໍ່ສ້າງກຳແພງອ້ອມຮອບ ເມືອງຕັ້ງແຕ່ ມິນໂລ ໂດຍຮອບ
ແລະ ໂຢອາບ ກໍ ໄດ້ ສ້ອມແປງ ສ່ວນ ທີ່ ເຫລືອ ຂອງ ເມືອງ ນັ້ນ 9ດາວິດ ໄດ້ ຈະເລີນ ຍິ່ງ ໃຫຍ່ ຂຶ້ນ
ເພາະວ່າ ພຣະຜູ້ເປັນເຈົ້າ ແຫ່ງຈັກກະວານໄດ້ສະຖິດຢູ່ກັບພະອົງ

## ລາຍຊື່ພວກວິລະບູລຸດຂອງດາວິດ

10ຕໍ່ໄປນີ້ແມ່ນຄົນທີ່ເກັ່ງກ້າໃນພວກວິລະບູລຸດທີ່ຢູ່ຝ່າຍ ດາວິດ ຜູ້ທີ່ສະໜັບສະໜູນພະອົງຢ່າງ
ແຂງແຮງ ໃນລາຊະອານາຈັກຂອງພະອົງດ້ວຍກັນກັບຊາວ ອິສຣາເອນ ທັງໝົດ ຕັ້ງພະອົງໃຫ້
ເປັນກະສັດຕາມພຣະທຳຂອງ ພຣະຜູ້ເປັນເຈົ້າກ່ຽວກັບເລື່ອງ ອິສຣາເອນ 11ຕໍ່ໄປນີ້ແມ່ນຈຳນວນ
ວິລະບູລຸດຂອງ ດາວິດ ຄື ຢາໂຊເບອາມ ຄົນຮັກໂມນີ ເປັນຫົວໜ້າພວກຜູ້ບັງຄັບບັນຊາ ລາວ

[ກ]2 ຊາມູເອນ 5:1-5 [ຂ]2 ຊາມູເອນ 5:6-12

ຍົກຫອກຂອງລາວສູ້ຮົບກັບຄົນສາມຮ້ອຍຄົນ ແລະຂ້າຕາຍໃນຄາວດຽວກັນ

12ແລະຖັດຈາກລາວຄື ເອເລອາຊາ ລູກຊາຍ ໂດໂດ ຄົນ ອາໂຮອາ ຊຶ່ງເປັນຜູ້ໜຶ່ງໃນວິລະບູ-
ລຸດທັງສາມຄົນຂອງ ດາວິດ 13ລາວຢູ່ກັບ ດາວິດ ທີ່ ປັດດຳມິມ ເມື່ອຄົນ ຟີລິດສະຕິນ ຊຸມນຸມກັນ
ເຮັດສົງຄາມຢູ່ບ່ອນນັ້ນ, ມີທີ່ດິນຕອນໜຶ່ງມີເຂົ້າບາເລເຕັມໄປໝົດ ແລະຄົນທັງຫລາຍກໍປົບໜີຕໍ່-
ໜ້າຄົນ ຟີລິດສະຕິນ 14ແຕ່ລາວຢືນຢູ່ທ່າມກາງທີ່ດິນຕອນນັ້ນ ແລະປ້ອງກັນດິນຕອນນັ້ນໄວ້
ແລະ ໄດ້ຂ້າຄົນ ຟີລິດສະຕິນ ພຣະຜູ້ເປັນເຈົ້າ ໄດ້ຊ່ວຍພວກ ເຂົາ ໃຫ້ພົ້ນດ້ວຍ ໄຊຊະນະອັນຍິ່ງ
ໃຫຍ່

15ໃນພວກນາຍທະຫານ ເອກສາມສິບຄົນນັ້ນ ມີສາມຄົນໄດ້ລົງໄປຮອດກ້ອນຫີນດານ ເພື່ອໄປ
ຫາ ດາວິດ ທີ່ ຖ້ຳ ອະດູລາມ ໃນຂະນະທີ່ກອງທັບຂອງຄົນ ຟີລິດສະຕິນ ຕັ້ງຄ້າຍພັກທີ່ຮ່ອມພູ ເຣ-
ຟາຢິມ 16ໃນຄາວນັ້ນ ດາວິດຢູ່ໃນປ້ອມທີ່ເຂັ້ມແຂງ ແລະກອງທັບ ຟີລິດສະຕິນ ຢູ່ທີ່ ເບັດເລເຮັມ
17ດາວິດ ກ່າວດ້ວຍຄວາມອາໄລວ່າ "ໃຜນໍ ຈະ ສົ່ງ ນ້ຳຈາກບໍ່ທີ່ ເບັດເລເຮັມ ຊຶ່ງຢູ່ໃກ້ຂ້າງປະຕູ
ເມືອງມາໃຫ້ເຮົາດື່ມໄດ້" 18ແລ້ວຄົນທັງສາມກໍແຫກຄ້າຍຂອງຄົນ ຟີລິດສະຕິນ ເຂົ້າໄປ ແລະຕັກ
ນ້ຳມາຈາກບໍ່ ເບັດເລເຮັມ ທີ່ຢູ່ຂ້າງປະຕູເມືອງ ນຳເອົາມາຖວາຍແກ່ດາວິດ ແຕ່ດາວິດບໍ່ໄດ້ດື່ມ-
ນ້ຳນັ້ນ ພະອົງໄດ້ຖອກອອກຖວາຍແດ່ພຣະຜູ້ເປັນເຈົ້າ 19ແລະກ່າວວ່າ "ໂອ້ ພຣະອົງເຈົ້າເອີຍ
ຂໍຢ່າໃຫ້ຂ້ານ້ອຍເຮັດການຢ່າງນີ້ ຄວນບໍທີ່ຂ້ານ້ອຍຈະດື່ມເລືອດຂອງຄົນ ເຫລົ່ານີ້ຜູ້ທີ່ສ່ຽງຊີວິດ
ຂອງພວກເຂົາ? ເພາະຍ້ອນການສ່ຽງຊີວິດຂອງພວກເຂົາເອງ ພວກເຂົາຈຶ່ງໄດ້ເອົານ້ຳນີ້ມາ"
ເພາະສະນັ້ນ ດາວິດ ຈຶ່ງບໍ່ໄດ້ດື່ມນ້ຳທີ່ທະຫານເກັ່ງກ້າສາມຄົນນັ້ນໄດ້ເອົາມາ

20ຝ່າຍ ອາບີຊາຍ ນ້ອງຊາຍຂອງ ໂຢອາບ ເປັນຫົວໜ້າຂອງສາມຄົນນັ້ນ ເພິ່ນໄດ້ຍົກຫອກຂອງ
ເພິ່ນສູ້ຮົບກັບຄົນສາມຮ້ອຍ ແລະຂ້າຕາຍ ເພິ່ນຈຶ່ງໄດ້ຮັບຊື່ສຽງເໝືອນກັບວິລະບູລຸດສາມຄົນນັ້ນ
21ໃນຈຳນວນສາມຄົນ ເພິ່ນມີຊື່ສຽງຫລາຍກວ່າອີກສອງຄົນນັ້ນ ແລະໄດ້ເປັນຜູ້ບັງຄັບບັນຊາ
ພວກເຂົາ ແຕ່ເພິ່ນບໍ່ມີຍົດເທົ່າກັບສາມຄົນທຳອິດນັ້ນ

22ແລະ ເບນາຢາ ລູກຊາຍ ເຢໂຮຢາດາ ເປັນລູກຊາຍຂອງຄົນເກັ່ງກ້າແຫ່ງຊາວເມືອງ ກັບເຊ-
ເອນ ເປັນຄົນໃຫຍ່ໄດ້ກະທຳໃນສິ່ງທີ່ກ້າຫານຫລາຍ ລາວໄດ້ຂ້າຄົນ ເໝືອນ ໂຕສິງ ໃຫຍ່ຂອງ
ໂມອາບ ເສຍສອງຄົນ; ລາວໄດ້ລົງໄປຂ້າສິງໃຫຍ່ໃນຫລຸມໃນມື້ທີ່ມີຫິມະຕົກ 23ລາວໄດ້ຂ້າຄົນ
ເອຢິບ ຄົນໜຶ່ງ ເປັນຊາຍທີ່ມີຮູບຮ່າງ ໃຫຍ່ ສູງຫ້າສອກ ຄົນ ເອຢິບ ຄົນນັ້ນຖືຫອກເໝືອນໄມ້ກຳ
ພັ່ນ ຕ່ຳແຜ່ນ, ແຕ່ເບນາອີຢາຖືໄມ້ເທົ້າລົງໄປຫາລາວ ແລະຍາດເອົາຫອກຈາກມືຂອງຄົນ ເອ-
ຢິບ ແລະຂ້າດ້ວຍຫອກຂອງລາວເອງ 24ສິ່ງ ເຫລົ່ານີ້ ເບນາຢາ ລູກຊາຍ ເຢໂຮຢາດາ ໄດ້ເຮັດ
ແລະໄດ້ຮັບຊື່ສຽງໃນໝູ່ທະຫານທີ່ເກັ່ງກ້າສາມຄົນນັ້ນ 25ເບິ່ງແມ ລາວມີຊື່ສຽງ ໂດ່ງດັງກວ່າສາມ
ສິບຄົນນັ້ນ, ແຕ່ລາວບໍ່ມີຍົດສັກເທົ່າກັບສາມຄົນທຳອິດ ແລະ ດາວິດ ໄດ້ແຕ່ງຕັ້ງລາວໃຫ້ເປັນຜູ້
ບັງຄັບບັນຊາທະຫານຮັກສາພະອົງ

26ນອກນັ້ນ ຍັງມີພວກທະຫານທີ່ເກັ່ງກ້າຂອງກອງທັບຄື ອາສາເຮນ ນ້ອງຊາຍຂອງ ໂຢອາບ
ເອນຮະນັນ ລູກຊາຍຂອງ ໂດໂດ ຊາວ ເບັດເລເຮັມ

27ຊາມໂມດ ຊາວເມືອງ ຮາໂຣ, ເຮເລັດ ຄົນ ເປໂລນ

28ອີຣາລູກຊາຍອີກເກດຊາວເມືອງເຕໂກອາ, ອາບີເອເຊຊາວເມືອງອານາໂທດ
29ສິບເບກາຍຄົນຮູຊາຍ, ອີລາຍ ຄົນອາໂຮອາ
30ມາຣາຣາຍຊາວເນໂຕຟາ, ເຮເລັດລູກຊາຍບາອານາເຮຊາວເນໂຕຟາ
31ອີທາຍລູກຊາຍຣີບາຍແຫ່ງເມືອງກິເບອາຄົນເບັນຢາມິນ, ເບນາຢາ ຊາວປີຣາໂທນ
32ຮູຣາຍຊາວລານທານກາອາດ, ອາບີເອນ ຄົນອາບາດ
33ອາຊະມາເວດຄົນບາຮູຣູມ, ເອລີຢາບາ ຊາວຊາອານໂບນ
34ລູກຫລານຮາເຊັມຄົນກີໂຊນ, ໂຢນາທານລູກຊາຍຊາກີ ຊາວຮາຣາ
35ອາຮີອາມລູກຊາຍສາການ ຊາວຮາຣາ, ເອລີຟັນ ລູກຊາຍອູເຣ
36ເຮເຟ ຄົນເມເກຣາດ, ອາຮີຢາຄົນເປໂລນ
37ເຮດຊະໂຣ ຊາວກາເມນ, ນາອາຣາຍລູກຊາຍເອຊະບາຍ
38ໂຢເອນນ້ອງຊາຍນາທານ, ມິບຮາລາລູກຊາຍຮັກຣີ
39ເຊເລັກຄົນອຳໂມນ, ນາຮາຣາຍ ຊາວເບໂຣທາຍຜູ້ຖືອາວຸດຂອງໂຢອາບລູກຊາຍຂອງ
ນາງເຊຣູຢາ
40ອີຣາຄົນອີດຣີ, ກາເຣບຄົນອີດຣີ
41ອູຣີຢາຄົນຮິດຕີ, ຊາບາດລູກຊາຍອາຣະລາຍ
42ອາດີນາລູກຊາຍຊີຊາຄົນຣູເບັນ ເປັນຫົວໜ້າຂອງຄົນຣູເບັນ ແລະສາມສິບຄົນທີ່ຢູ່ນຳກັນ
ກັບພວກເຂົາ
43ຮານານລູກຊາຍມາອາກາ ແລະໂຢຊາຟັດ ຄົນມິດນີ
44ອຸດຊີຢາຊາວອັດຊະເຕຣາດ, ຊາມາ ແລະເຢອີເອນລູກຊາຍໂຮທາມຄົນອາໂຣເອ
45ເຢດີອາເອນລູກຊາຍຊິມຣີ ແລະໂຢຮານ້ອງຊາຍຂອງລາວ ຊາວຕີເຊ
46ເອລີເອນຊາວມາຮາວາ ເຢຣີບາຍ ແລະໂຢຊາວີຢາ ລູກຊາຍເອນນາອາມ ແລະອີທະ-
ມາ ຊາວໂມອາບ
47ເອລີເອນ, ໂອເບັດ ແລະຢາອາສີເອນ ຊາວເມໂຊບາ

# ບົດທີ 12

## ພວກຕ່າງໆທີ່ເຂົ້າຮ່ວມກັບດາວິດຢູ່ທີ່ຊິກລັກ

1ຕໍ່ໄປນີ້ແມ່ນຈຳພວກຄົນທີ່ມາຫາດາວິດທີ່ຊິກລັກ ຂະນະທີ່ພະອົງຍັງລີ້ຊາອູນລູກຊາຍຂອງ
ກີເຊ ພວກເຂົາເປັນຄົນໃນຈຳພວກທີ່ເກັ່ງກ້າຊຶ່ງຊ່ວຍພະອົງໃນການສູ້ຮົບ 2ພວກເຂົາເປັນນັກຍິງ
ທະນູ ພວກເຂົາຄວ່າງກ້ອນຫີນດ້ວຍສະຫລິ່ງ ແລະຍິງທະນູໄດ້ດ້ວຍມືຂວາ ຫລືມືຊ້າຍ ພວກ
ເຂົາເປັນຄົນເບັນຢາມິນ ຊຶ່ງເປັນພີ່ນ້ອງຂອງຊາອູນ
3ອາຮີເອເຊເປັນຫົວໜ້າ ຖັດໄປແມ່ນໂຢອາດລູກຊາຍຂອງເຊມາອາຊາວເມືອງກິເບອາ
ແລະເຢຊີເອນ ກັບເປເລັດ ລູກຊາຍທັງສອງຂອງອາຊະມາເວດ, ເບຣາກາແລະເຢຮູຊາວ
ອານາໂທດ

4ອີຊະມາຢາ ຊາວ ກິເບໂອນ ເປັນຄົນທີ່ເກັ່ງກ້າໃນຈຳພວກສາມສິບຄົນນັ້ນ ແລະເປັນຫົວໜ້າ
ໃຫຍ່ໃນຈຳນວນສາມສິບຄົນນັ້ນ, ເຢເຣມີຢາ, ຢາຮາຊີເອນ, ໂຢຮານານ, ໂຢຊາບັດ ຊາວເມືອງ
ເກເດຣາ

5ເອລູຊາຍ, ເຢຣີໂມດ, ເບອາລີຢາ, ເຊມາຣີຢາ, ເຊຟາຕີຢາຄົນຮາຣຸບ

6ເອນການາ, ອິດຊີຢາ, ອັດຊາເຣນ, ໂຢເອເຊ, ຢາໂຊເບອາມຄົນໂກຣາ

7ແລະໂຢເອລາ ກັບ ເຊບາດີຢາ ລູກຊາຍຂອງ ເຢໂຣຮາມ ຊາວ ເກໂດເຣ

8ມີຄົນທີ່ມີໃຈກ້າຫານ ແລະເປັນຜູ້ຊຳນານໃນການເຮັດເສິກຈາກຄົນ ຄາດ ໄດ້ເຂົ້າໄປຫາ ດາ-
ວິດ ທີ່ປ້ອມອັນເຂັ້ມແຂງໃນຖິ່ນແຫ້ງແລ້ງກັນດານ ພວກເຂົາຖືໂລ່ ແລະຫອກຮູບໜ້າຂອງພວກ
ເຂົາເໝືອນໜ້າສິງໃຫຍ່ ແລະແລ່ນໄວເໝືອນກວາງຢູ່ເທິງພູເຂົາ 9ເອເຊ ເປັນຜູ້ທຳອິດ, ໂອບາດີ-
ຢາ ທີສອງ ແລະ ເອລີອາບ ທີສາມ 10ມິດຊະມັນນາ ທີສີ່, ເຢເຣມີຢາ ທີຫ້າ 11ອາດຕາຍ ທີຫົກ,
ເອລີເອນ ທີເຈັດ 12ໂຢຮານານ ທີແປດ, ເອນຊາບັດ ທີເກົ້າ 13ເຢເຣມີຢາ ທີສິບ, ມັກບັນນາຍ ທີ
ສິບເອັດ 14ຄົນເຫລົ່ານີ້ເປັນລູກຊາຍຂອງ ຄາດ ເປັນນາຍທະຫານໃນກອງທັບ ຜູ້ນ້ອຍກໍເປັນ
ນາຍຮ້ອຍ, ຜູ້ໃຫຍ່ກໍເປັນນາຍພັນ 15ພວກເຫລົ່ານີ້ເປັນຄົນທີ່ຂ້າມແມ່ນ້ຳຢໍແດນ ໃນເດືອນທຳອິດ
ເມື່ອນ້ຳຖ້ວມຕາຝັ່ງທັງໝົດ ແລະຂັບໄລ່ຄົນທີ່ອາໄສຢູ່ຕາມບັນດາຮ່ອມພູ ແຕກໜີໄປທາງທິດ-
ຕາເວັນອອກແລະທິດຕາເວັນຕົກ

16ມີຄົນ ເບັນຢາມິນ ແລະຄົນ ຢູດາ ມາເຝົ້າຍາມ ດາວິດ ໃນບ່ອນກຳບັງທີ່ເຂັ້ມແຂງ 17ດາວິດ
ໄດ້ອອກໄປຕ້ອນຮັບພວກເຂົາ ແລະກ່າວກັບພວກເຂົາວ່າ "ຖ້າທ່ານທັງຫລາຍມາຫາຂ້ອຍເພື່ອ
ເປັນມິດໄມຕີ ເພື່ອຊ່ວຍຂ້ອຍ, ຈິດໃຈຂອງຂ້ອຍຈະຜູກພັນຕິດກັບພວກທ່ານ, ແຕ່ຖ້າມາເພື່ອຈະ
ມອບຂ້ອຍໃຫ້ແກ່ພວກສັດຕູຂອງຂ້ອຍ ທັງທີມືຂອງຂ້ອຍບໍ່ມີຄວາມຜິດໃດໆ ຂໍໃຫ້ພຣະເຈົ້າ
ແຫ່ງບັນພະບູລຸດຂອງເຮົາທັງຫລາຍທອດພຣະເນດ ແລະລົງໂທດທ່ານທັງຫລາຍເຖີດ" 18ແລ້ວ
ພຣະວິນຍານ ໄດ້ມາເທິງ ອາມາສາຍ ຫົວໜ້າພວກຜູ້ບັງຄັບບັນຊາ ແລະເພິ່ນທູນວ່າ "ຂ້າແດ່
ດາວິດ ພວກຂ້ານ້ອຍທັງຫລາຍເປັນຂອງພະອົງ, ຂ້າແດ່ບຸດຂອງ ເຢຊີ ເອີຍ ພວກເຮົາຢູ່ຝ່າຍພະ
ອົງ ສັນຕິສຸກ, ສັນຕິສຸກ ຈົ່ງມີແດ່ພະອົງ ແລະສັນຕິສຸກຈົ່ງມີແດ່ຄົນທັງຫລາຍທີ່ຊ່ວຍພະອົງ
ເພາະວ່າ ພຣະເຈົ້າ ຂອງພະອົງໄດ້ອຸປະຖຳພະອົງຢູ່" ແລ້ວ ດາວິດ ກໍໄດ້ຮັບພວກເຂົາໄວ້ ແລະໄດ້
ຕັ້ງໃຫ້ເປັນນາຍທະຫານໃນກອງທັບ

19ຈາກ ຕະກູນ ມານາເຊ ກໍ ມີຄົນ ຈຳນວນ ຫລາຍ ທີ່ ໄດ້ ຫລົບໜີ ໄປ ເຂົ້າຝ່າຍ ດາວິດ ເໝືອນກັນ
ເມື່ອພະອົງມາກັບຄົນ ຟີລິດສະຕິນ ເພື່ອຕໍ່ສູ້ກັບ ຊາອູນ ແຕ່ພວກຝ່າຍ ດາວິດ ບໍ່ໄດ້ຊ່ວຍຄົນ ຟີລິດ-
ສະຕິນ ພວກຜູ້ປົກຄອງຄົນ ຟີລິດສະຕິນ ເມື່ອໄດ້ປຶກສາກັນແລ້ວ ກໍໄດ້ສົ່ງພະອົງກັບໄປ ແລະ
ເວົ້າກັນວ່າ "ລາວຈະຫລົບໜີໄປຄືນດີກັບ ຊາອູນ ນາຍຂອງລາວ ໂດຍ ເອົາຫົວຂອງພວກເຮົາໄປ
ຖວາຍດ້ວຍ" 20ຂະນະທີ່ ດາວິດ ໄປເຖິງ ເມືອງ ຊິກລັກ ຊາວ ມານາເຊ ພວກນີ້ໄດ້ຫລົບໜີໄປສົມ-
ທົບກັບພະອົງຄື ອັດນາ, ໂຢຊາບັດ ເຢດີອາເອນ, ມີກາເອນ, ໂຢຊາບັດ, ເອລີຮູ ແລະຊິນ-
ເລທາຍ ຫົວໜ້າບັນດາກອງພັນທີ່ຢູ່ໃນຕະກູນ ມານາເຊ 21ພວກເຂົາຊ່ວຍເຫລືອ ດາວິດ ຕໍ່ສູ້ພວກ
ໂຈນປຸ້ນ ເພາະພວກເຂົາທັງໝົດ ເປັນທະຫານທີ່ເກັ່ງກ້າ ແລະເປັນຜູ້ບັງຄັບບັນຊາໃນກອງທັບ

22ໃນສະໄໝນັ້ນ ທຸກໆມື້ມີຄົນມາເຂົ້າຮ່ວມຝ່າຍຂອງ ດາວິດ ເພື່ອຈະຊ່ວຍເຫລືອພະອົງຈົນເປັນ
ກອງທັບໃຫຍ່ ເໝືອນກອງທັບຂອງ ພຣະເຈົ້າ

## ກອງທັບຂອງຕະກູນຕ່າງໆ ຕັ້ງດາວິດໃຫ້ເປັນກະສັດ

23ຕໍ່ໄປນີ້ເປັນຈຳນວນທະຫານທີ່ຖືອາວຸດສຳລັບສົງຄາມທີ່ໄດ້ມາຫາ ດາວິດ ໃນເມືອງ ເຮັບໂຣນ
ເພື່ອຈະມອບລາຊະອານາຈັກຂອງ ຊາອູນ ໃຫ້ແກ່ພະອົງຕາມພຣະທຳຂອງ ພຣະຜູ້ເປັນເຈົ້າ
24ລູກຫລານ ຢູດາ ທີ່ຖືໂລ່ ແລະຫອກມີຫົກພັນແປດຮ້ອຍຄົນ ເປັນທະຫານທີ່ຕິດອາວຸດພ້ອມ
ສຳລັບສົງຄາມ
25ຈາກລູກຫລານຊີເມໂອນ ມີທະຫານທີ່ເກັ່ງກ້າຊຳນານໃນການເສິກເຈັດພັນໜຶ່ງຮ້ອຍຄົນ.
26ຈາກລູກຫລານຊາວ ເລວີ ສີ່ພັນຫົກຮ້ອຍຄົນ 27ເຢໂຮຢາດາ ເປັນຫົວໜ້າລູກຫລານ ອາໂຣນ
ແລະມີຄົນມານຳເພິ່ນສາມພັນເຈັດຮ້ອຍຄົນ. 28ຊາໂດກ ທະຫານໜຸ່ມທີ່ມີໃຈກ້າຫານ ແລະຄົນ
ຈາກຄອບຄົວບັນພະບູລຸດຂອງລາວເອງ ຊຶ່ງເປັນຜູ້ບັງຄັບບັນຊາຊາວສອງຄົນ
29ຈາກລູກຫລານ ເບັນຢາມິນ ພີ່ນ້ອງຂອງ ຊາອູນ ສາມພັນຄົນ ຊຶ່ງແຕ່ກ່ອນໃນພວກນີ້ຈົງຮັກ
ພັກດີຕໍ່ເຊື້ອສາຍຂອງຊາອູນ
30ຈາກພວກລູກຫລານ ເອຟຣາຢິມ ທະຫານເກັ່ງກ້າສອງໝື່ນແປດຮ້ອຍຄົນ ເປັນຄົນທີ່ມີຊື່
ສຽງດີໃນຄອບຄົວ ບັນພະບູລຸດຂອງພວກເຂົາ
31ຈາກ ມານາເຊ ເຄິ່ງຕະກູນໜຶ່ງໝື່ນແປດພັນຄົນ ຜູ້ຊຶ່ງພວກເຂົາໄດ້ບົ່ງຊື່ໄວ້, ໄດ້ພາກັນມາ
ແລະຕັ້ງ ດາວິດ ເປັນກະສັດ
32ຈາກລູກຫລານ ອິດຊາຄາ ຊຶ່ງມີຜູ້ສັງເກດຮູ້ວ່າ ອິສຣາເອນ ຄວນເຮັດສິ່ງໃດ, ມີຫົວໜ້າຂອງ
ພວກເຂົາ ສອງຮ້ອຍຄົນ ແລະພີ່ນ້ອງທັງໝົດກໍຢູ່ໃຕ້ການບັງຄັບບັນຊາຂອງພວກເຂົາ
33ສຳລັບຄົນ ເຊບູລູນ ມີຫ້າໝື່ນຄົນທີ່ເຝິກແລ້ວກຽມພ້ອມເຂົ້າສູ້ຮົບ ມີອາວຸດທຸກຢ່າງເພື່ອເຮັດ
ສົງຄາມ ໂດຍບໍ່ແມ່ນດ້ວຍສອງຈິດສອງໃຈ
34ຈາກພວກ ນັບທາລີ ຜູ້ບັງຄັບບັນຊາໜຶ່ງພັນຄົນ ຊຶ່ງມີຄົນຖືໂລ່ ແລະຫອກມາດ້ວຍສາມ
ໝື່ນເຈັດພັນຄົນ
35ຈາກພວກ ດານ ມີຄົນທີ່ໄດ້ເຝິກແອບໃນການສູ້ຮົບແລ້ວສອງໝື່ນແປດພັນຫົກຮ້ອຍຄົນ
36ຈາກພວກ ອາເຊ ສີ່ໝື່ນຄົນທີ່ໄດ້ເຝິກແອບແລ້ວພ້ອມທີ່ຈະໄປສົງຄາມ
37ແລະຈາກຟາກແມ່ນ້ຳຢໍແດນ ຟາກນັ້ນ ຊາວ ຣູເບັນ, ຊາວ ຄາດ ແລະຈາກ ມານາເຊ ເຄິ່ງ
ຕະກູນມີໜຶ່ງແສນສອງໝື່ນຄົນທີ່ຕິດອາວຸດທຸກຢ່າງເພື່ອສູ້ຮົບ
38ທະຫານທັງໝົດ ເຫລົ່ານີ້ ພ້ອມທີ່ຈະອອກສະໜາມຮົບກໍມາຮອດ ເມືອງ ເຮັບໂຣນ ດ້ວຍ
ຄວາມຕັ້ງໃຈທີ່ ຈະ ຕັ້ງ ດາວິດ ເປັນ ກະສັດ ປົກຄອງ ອິສຣາເອນ ທັງ ໝົດ ບັນດາ ອິສຣາເອນ ທີ່
ເຫລືອຢູ່ ກໍເປັນໃຈດຽວກັນທີ່ຈະແຕ່ງຕັ້ງ ດາວິດ ໃຫ້ເປັນກະສັດ 39ພວກເຂົາທັງຫລາຍໄດ້ຢູ່ບ່ອນ
ນັ້ນກັບ ດາວິດ ສາມມື້ທັງກິນ ແລະດື່ມ ເພາະວ່າພີ່ນ້ອງຂອງພວກເຂົາໄດ້ຕຽມອາຫານໄວ້ສຳລັບ
ພວກ ເຂົາ ແລ້ວ 40ຫລາຍໄປກວ່ານັ້ນອີກຄົນທັງຫລາຍທີ່ຢູ່ໃກ້ບ່ອນນັ້ນຈົນໄປຮອດ ອິດຊາຄາ,
ເຊບູລູນ ແລະ ນັບທາລີ ໄດ້ຈັດ ອາຫານບັນທຸກໃສ່ຫລັງລາ ອູດ, ຫລັງລໍ ແລະງົວ ມີອາຫານ

ຢ່າງຫລວງຫລາຍເປັນແປ້ງ ແຜ່ນໝາກເດື່ອເທດ, ທໍ່ອະງຸ່ນແຫ້ງ, ນ້ຳອະງຸ່ນ, ນ້ຳມັນງົວ ແລະ
ແກະ ຍ້ອນວ່າມີຄວາມຊົມຊື່ນຍິນດີໃນ ອິສຣາເອນ

# ບົດທີ 13

## ດາວິດມີຄວາມປະສົງທີ່ຈະນຳຫີບພຣະສັນຍາມານະຄອນເຢຣູຊາເລັມ

1ດາວິດ ໄດ້ປຶກສາຫາລືກັບນາຍພັນ, ນາຍຮ້ອຍແລະບັນດາຫົວໜ້າທຸກໆຄົນ 2ແລະ ດາວິດ
ກ່າວກັບຊຸມນຸມຊົນ ອິສຣາເອນ ທັງປວງວ່າ “ຖ້າທ່ານທັງຫລາຍເຫັນດີ ແລະຖ້າເປັນນ້ຳພຣະໄທ
ຂອງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງ ເຮົາ ກໍໃຫ້ເຮົາທັງຫລາຍສົ່ງຄົນໄປຫາພີ່ນ້ອງຂອງ ເຮົາຜູ້ທີ່
ເຫລືອຢູ່ໃນ ແຜ່ນດິນ ອິສຣາເອນ ທັງໝົດໃຫ້ໄປຫາພວກປະໂລຫິດ ແລະພວກ ເລວີ ຊຶ່ງຢູ່ໃນຫົວ
ເມືອງ ແລະທົ່ງຫຍ້າຂອງພວກເຂົາເພື່ອໃຫ້ພວກເຂົາມາໂຮມກັບພວກເຮົາພ້ອມກັນ 3ແລະໃຫ້
ເຮົາທັງຫລາຍນຳຫີບ ແຫ່ງ ພຣະເຈົ້າ ຂອງພວກເຮົາມາຢູ່ນຳພວກເຮົາອີກ ເພາະໃນສະໄໝຂອງ
ຊາອູນ ພວກເຮົາບໍ່ໄດ້ສືບຖາມເຖິງຫີບນັ້ນ” 4ຊຸມນຸມຊົນທັງໝົດກໍຕົກລົງທີ່ຈະເຮັດຕາມເພາະສິ່ງ
ນັ້ນເປັນສິ່ງທີ່ພໍໃຈໃນສາຍຕາຂອງປະຊາຊົນທັງ

## ດາວິດອອກໄປເອົາຫີບຄຳສັນຍາ[ກ]

5ເພາະສະນັ້ນ ດາວິດ ຈຶ່ງປະຊຸມຊາວ ອິສຣາເອນ ທັງໝົດ ຕັ້ງແຕ່ ຊີໂຮ ແຫ່ງ ເອຢິບ ຈົນຮອດ
ທາງເຂົ້າເມືອງ ຮາມັດ ເພື່ອຈະນຳເອົາຫີບຄຳສັນຍາຂອງ ພຣະເຈົ້າ ມາຈາກ ກີຣິຍາດ-ເຢອາຣິມ
6ດາວິດ ກັບ ອິສຣາເອນ ທັງປວງ ໄດ້ຂຶ້ນໄປເຖິງ ບາອາລາ ຊຶ່ງຢູ່ ກີຣິຍາດ-ເຢອາຣິມ ທີ່ເປັນຂອງ
ຢູດາ ເພື່ອຈະໄດ້ນຳຫີບຄຳສັນຍາຂອງ ພຣະເຈົ້າ ຈາກບ່ອນນັ້ນ ເປັນຫີບຄຳສັນຍາຂອງ ພຣະຜູ້-
ເປັນເຈົ້າ ທີ່ສະຖິດຢູ່ລະຫວ່າງພວກເຄຣຸບ ຊຶ່ງພຣະນາມກໍຕັ້ງໄວ້ຢູ່ບ່ອນນັ້ນ
7ແລະພວກເຂົາກໍບັນທຸກຫີບຄຳສັນຍາຂອງ ພຣະເຈົ້າ ໄປໃນກວຽນຄັນໃໝ່ຈາກຄອບຄົວຂອງ
ອາບີນາດາບ ແລະ ອຸດຊາ ກັບ ອາຮີໂອ ຊຶ່ງເປັນຜູ້ທີ່ບັນຊາກວຽນໄປ 8ດາວິດ ກັບ ອິສຣາເອນ ທັງ
ປວງກໍຊົມຊື່ນຍິນດີຢູ່ຕໍ່ພຣະພັກ ພຣະເຈົ້າ ດ້ວຍເຕັມກຳລັງຂອງພວກເຂົາ ດ້ວຍເພງ ພິນຄູ່ ພິນ
ໃຫຍ່ ກອງ ແສ່ງ ແລະແກ

## ອຸດຊາເສຍຊີວິດ

9ແລະ ເມື່ອພວກເຂົາມາເຖິງລານຟາດເຂົ້າຂອງ ກີໂດນ ອຸດຊາ ກໍຢຽດມືອອກເພື່ອຈັບຫີບໄວ້
ເພາະງົວເຕະສະດຸດ 10ແລ້ວພຣະພິໂລດຂອງ ພຣະຜູ້ເປັນເຈົ້າ ໄດ້ພຸ່ງຂຶ້ນຕໍ່ ອຸດຊາ ແລະພຣະອົງ
ໄດ້ປະຫານຊີວິດລາວ ເພາະລາວຢຽດມືແຕະຕ້ອງຫີບນັ້ນ ແລະລາວກໍສິ້ນຊີວິດຕໍ່ພຣະພັກ ພຣະ-
ເຈົ້າ

11ດາວິດ ບໍ່ໄດ້ພໍພະໄທ ເພາະ ພຣະຜູ້ເປັນເຈົ້າ ໄດ້ທຳລາຍ ອຸດຊາ ຈຶ່ງເອີ້ນບ່ອນນັ້ນວ່າ ເປ-
ເຣັດ ອຸດຊາ ຈົນເຖິງທຸກມື້ນີ້ 12ໃນມື້ນັ້ນ ດາວິດ ໄດ້ຢ້ານຢຳເກງ ພຣະເຈົ້າ ທັງກ່າວວ່າ “ເຮົາຈະ
ນຳຫີບຂອງ ພຣະເຈົ້າ ເຂົ້າໄປໃນ ເຮືອນຂອງເຮົາຢ່າງໃດ?’ 13ດາວິດ ຈຶ່ງບໍ່ໄດ້ນຳຫີບຄຳສັນຍາໄປ
ໄວ້ໃນ ເມືອງຂອງ ດາວິດ ແຕ່ໄດ້ນຳຫີບແວະໄປໄວ້ທີ່ ເຮືອນ ໂອເບັດ ເອໂດມ ຊາວ ກັດ 14ແລະ

[ກ]2 ຊາມູເອນ 6:1-11

ຫີບຄຳສັນຍາຂອງ ພຣະເຈົ້າ ໄດ້ຄ້າງຢູ່ກັບຄອບຄົວຂອງ ໂອເບັດ ເອໂດມ ທີ່ເຮືອນຂອງລາວສາມ
ເດືອນ ພຣະຜູ້ເປັນເຈົ້າ ໄດ້ອວຍພຣະພອນແກ່ຄອບຄົວຂອງ ໂອເບັດ ເອໂດມ ແລະສິ່ງທັງໝົດທີ່
ລາວມີຢູ່

# ບົດທີ 14

## ກະສັດດາວິດຮັ່ງມີ ແລະອຸດົມສົມບູນ[ກ]

1ຮີຣາມ ກະສັດ ເມືອງ ຕີເຣ ໄດ້ໃຊ້ຜູ້ສົ່ງຂ່າວໄປຫາກະສັດ ດາວິດ ແລະໄດ້ສົ່ງໄມ້ແປກ ພ້ອມ
ທັງຊ່າງກໍ່ ແລະຊ່າງໄມ້ເພື່ອຈະສ້າງວັງຖວາຍແກ່ກະສັດ ດາວິດ 2ດາວິດ ຮູ້ວ່າ ພຣະຜູ້ເປັນເຈົ້າ
ໄດ້ສະຖາປະນາຕົນໃຫ້ເປັນກະສັດ ອິສຣາເອນ ເພາະລາຊະອານາຈັກຂອງພະອົງ ກໍເປັນທີ່ຍົກ-
ຍໍຫລາຍຂຶ້ນ ເພື່ອເຫັນແກ່ອິສຣາເອນ ປະຊາຊົນຂອງພຣະອົງ.

## ບຸດຂອງດາວິດທີ່ເກີດໃນນະຄອນເຢຣູຊາເລັມ[ຂ]

3ດາວິດ ໄດ້ຮັບມະເຫສີເພີ່ມຂຶ້ນໃນກຸງ ເຢຣູຊາເລັມ ແລະໄດ້ມີບຸດຊາຍ ແລະບຸດຍິງຫລາຍຂຶ້ນ
ຕື່ມອີກ 4ຕໍ່ໄປນີ້ແມ່ນລາຍຊື່ລູກຊາຍຊຶ່ງພະອົງມີໃນ ເຢຣູຊາເລັມ ຄື ຊາມມູອາ, ໂຊບາບ, ນາ-
ທານ, ໂຊໂລໂມນ 5ອິບຮາ, ເອລີຊູອາ, ເອນເປເລັດ 6ໂນຄາ, ເນເຟັກ, ຢາເຟຍ 7ເອລີຊາມາ,
ເບເອລີຢາດາ, ເອລີເຟເລັດ

## ກະສັດດາວິດສູ້ຮົບຊະນະພວກຟີລິດສະຕິນ[ຄ]

8ເມື່ອຄົນ ຟີລິດສະຕິນ ໄດ້ຍິນຂ່າວວ່າ ດາວິດ ໄດ້ຮັບການ ເຈີມໃຫ້ເປັນກະສັດປົກຄອງ ອິສຣາ-
ເອນ ທັງປວງ ແລ້ວຄົນ ຟີລິດສະຕິນ ທັງຫລາຍກໍຂຶ້ນໄປຊອກຫາ ດາວິດ, ເມື່ອ ດາວິດ ໄດ້ຍິນເລື່ອງ
ນັ້ນກໍສະເດັດອອກໄປສູ້ຮົບກັບພວກເຂົາ 9ຝ່າຍຄົນ ຟີລິດສະຕິນ ໄດ້ບຸກຂຶ້ນໄປໃນຮ່ອມພູ ເຣຟາ-
ຢີມ 10ດາວິດ ໄດ້ທູນຖາມ ພຣະເຈົ້າ ວ່າ “ສົມຄວນບໍທີ່ຂ້າພະອົງຈະຂຶ້ນໄປຕໍ່ສູ້ພວກ ຟີລິດສະຕິນ,
ພະອົງຈະມອບພວກເຂົາໄວ້ໃນມືຂອງຂ້າພະອົງຫລືບໍ່?” ແລະ ພຣະຜູ້ເປັນເຈົ້າ ກ່າວຕອບພະອົງ
ວ່າ “ຈົ່ງຂຶ້ນໄປເຖີດ ແລະເຮົາຈະມອບພວກເຂົາໄວ້ໃນມືເຈົ້າ” 11ແລ້ວກະສັດ ດາວິດ ຈຶ່ງໄດ້ຂຶ້ນ
ໄປ ບາອານ-ເປຣາຊີມ ແລະໄດ້ໂຈມຕີຊະນະພວກເຂົາຢູ່ບ່ອນນັ້ນ ດາວິດ ໄດ້ກ່າວວ່າ “ພຣະ-
ເຈົ້າ ໄດ້ທຸບ ຂ້າເສິກ ຂອງ ຂ້າພະເຈົ້າ ດ້ວຍ ມືຂອງ ຂ້າພະເຈົ້າ ເໝືອນ ດັ່ງ ກະແສນ້ຳ ທີ່ ໄຫລ ທັ່ງ ໃສ່”
ດັ່ງນັ້ນ ພວກເຂົາຈຶ່ງເອີ້ນບ່ອນນັ້ນວ່າ ບາອານ-ເປຣາຊີມ 12ພວກເຂົາໄດ້ປະຖິ້ມຮູບເຄົາລົບ
ຂອງພວກເຂົາໃນບ່ອນນັ້ນ ແລະ ດາວິດ ສັ່ງໃຫ້ຈູດຮູບເຄົາລົບເຫລົ່ານັ້ນຖິ້ມ

13ແລ້ວ ພວກ ຟີລິດສະຕິນ ໄດ້ໄປທົ່ວຮ່ອມພູນັ້ນອີກ 14ເມື່ອ ດາວິດ ທູນຖາມ ພຣະເຈົ້າ ອີກ,
ພຣະເຈົ້າ ກໍກ່າວຕອບພະອົງວ່າ “ເຈົ້າຢ່າຂຶ້ນໄປຕາມພວກເຂົາ ຈົ່ງເວັ້ນໜີ ໄປອ້ອມຮອບພວກ
ເຂົາ ແລະໄປໂຈມຕີພວກເຂົາຢູ່ຖັດຈາກປ່າຕົ້ນມອນ 15ແລະເມື່ອເຈົ້າໄດ້ຍິນສຽງຂະບວນທັບ
ຍ່າງຢູ່ເທິງຍອດຕົ້ນມອນ ເວລານັ້ນຈົ່ງອອກໄປເຮັດເສິກ ເພາະວ່າ ພຣະເຈົ້າ ໄດ້ສະເດັດອອກ
ໄປກ່ອນໜ້າເຈົ້າແລ້ວ ເພື່ອຈະ ໂຈມຕີກອງທັບຂອງພວກ ຟີລິດສະຕິນ” 16ກະສັດ ດາວິດ ໄດ້ປະ-
ຕິບັດຕາມທີ່ ພຣະເຈົ້າ ໄດ້ບັນຊາແກ່ພະອົງ ແລະພວກເຂົາໄດ້ໂຈມຕີກອງທັບ ພວກຟີລິດສະຕິນ

[ກ]2 ຊາມູເອນ 5:11-12 [ຂ]2 ຊາມູເອນ 5:13-16; 1 ຂ່າວຄາວ 7:5-8 [ຄ]2 ຊາມູເອນ 5:17-25

ຕັ້ງແຕ່ເມືອງ ກິເບໂອນຮອດເມືອງ ເກເຊ
[17]ຊື່ສຽງຂອງ ດາວິດ ກໍຊ່າລືໄປສູ່ບັນດາປະເທດທັງຫລາຍ ແລະ ພຣະຜູ້ເປັນເຈົ້າ ໄດ້ໃຫ້ປະ-
ຊາຊາດທັງປວງຢ້ານກົວ ດາວິດ

# ບົດທີ 15

## ຄົນເລວີຫາມຫີບຂອງພຣະເຈົ້າໄປເຖິງກຸງເຢຣູຊາເລັມ

[1]ດາວິດ ໄດ້ສ້າງພະລາຊະວັງຂອງພະອົງຫລາຍຫລັງໃນນະຄອນ ດາວິດ ແລະພະອົງໄດ້ຕຽມ
ສະຖານທີ່ໜຶ່ງໄວ້ສຳລັບຫີບຄຳສັນຍາຂອງ ພຣະເຈົ້າ ແລະໄດ້ຕັ້ງເຕັນໄວ້ສຳລັບຫີບນັ້ນ. [2]ເມື່ອ-
ນັ້ນ ດາວິດ ໄດ້ກ່າວວ່າ "ນອກຈາກຄົນ ເລວີ ແລ້ວ ບໍ່ສົມຄວນທີ່ຈະໃຫ້ຄົນອື່ນຫາມຫີບຄຳສັນຍາ
ຂອງ ພຣະເຈົ້າ ເພາະວ່າ ພຣະຜູ້ເປັນເຈົ້າ ໄດ້ເລືອກພວກນີ້ໄວ້ໃຫ້ຫາມຫີບຄຳສັນຍາຂອງ ພຣະ-
ເຈົ້າ ແລະບົວລະບັດຫີບນັ້ນຕະຫລອດໄປ" [3]ດາວິດ ໄດ້ໂຮມປະຊຸມອິສຣາເອນ ທັງໝົດຢູ່ທີ່ ເຢຣູ-
ຊາເລັມ ເພື່ອຈະນຳຫີບຄຳສັນຍາຂອງ ພຣະຜູ້ເປັນເຈົ້າ ມາສູ່ບ່ອນຊຶ່ງພະອົງໄດ້ຈັດຕຽມໄວ້ແລ້ວ
ສຳລັບຫີບນັ້ນ [4]ດາວິດ ໄດ້ຮອບຮວມລູກຫລານຂອງ ອາໂຣນ ແລະຄົນ ເລວີ ມາໂຮມກັນ
[5]ຄືຈາກລູກຫລານ ໂກຮາດ, ອຸຣີເອນ ເປັນຫົວໜ້າ ພ້ອມກັບພີ່ນ້ອງຂອງລາວໜຶ່ງຮ້ອຍຊາວ
ຄົນ
[6]ຈາກລູກຫລານ ເມຣາຣີ, ອາສາຢາ ເປັນຫົວໜ້າ ພ້ອມກັບພີ່ນ້ອງຂອງລາວສອງຮ້ອຍຊາວ
ຄົນ
[7]ຈາກລູກຫລານ ເກໂຊມ, ໂຢເອນ ເປັນຫົວໜ້າ ກັບພີ່ນ້ອງຂອງລາວໜຶ່ງຮ້ອຍສາມສິບຄົນ
[8]ຈາກລູກຫລານ ເອລີຊາຟັນ, ເຊມາຢາ ເປັນຫົວໜ້າ ກັບພີ່ນ້ອງຂອງລາວສອງຮ້ອຍຄົນ
[9]ຈາກລູກຫລານ ເຮັບໂຣນ, ເອລີເອນ ເປັນຫົວໜ້າ ກັບພີ່ນ້ອງຂອງລາວແປດສິບຄົນ
[10]ຈາກລູກຫລານ ອຸດຊີເອນ, ອຳມີນາດາບ ເປັນຫົວໜ້າ ກັບພີ່ນ້ອງຂອງລາວໜຶ່ງຮ້ອຍສິບ
ສອງຄົນ;
[11]ແລ້ວ ດາວິດ ໄດ້ເອີ້ນປະໂລຫິດ ຊາໂດກ ແລະ ອາບີອາທາ ແລະພວກ ເລວີ ຄື ອຸຣີເອນ,
ອາສາຢາ, ໂຢເອນ, ເຊມາຢາ, ເອລີເອນ ແລະ ອຳມີນາດາບ [12]ພະອົງໄດ້ກ່າວກັບພວກເຂົາ
ວ່າ "ພວກເຈົ້າເປັນຫົວໜ້າຂອງບັນພະບູລຸດຂອງຄົນ ເລວີ ຈົ່ງຊຳລະຕົວຂອງພວກເຈົ້າ ແລະ
ພວກພີ່ນ້ອງຂອງພວກເຈົ້າ ເພື່ອພວກເຈົ້າຈະນຳຫີບຄຳສັນຍາຂອງ ພຣະຜູ້ເປັນເຈົ້າ ພຣະເຈົ້າ
ຂອງ ອິສຣາເອນ ຂຶ້ນໄປສະຖານທີ່ ຊຶ່ງເຮົາໄດ້ຈັດຕຽມໄວ້ສຳລັບຫີບນັ້ນ [13]ຍ້ອນພວກເຈົ້າບໍ່ໄດ້
ໄປຫາມໃນເທື່ອກ່ອນ; ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງພວກເຮົາຈຶ່ງໄດ້ລົງໂທດພວກເຮົາ ເພາະ
ເຮົາບໍ່ໄດ້ຊອກຫາພຣະອົງຕາມກົດບັນຍັດ" [14]ແລ້ວພວກປະໂລຫິດ ແລະຄົນ ເລວີ ຈຶ່ງໄດ້ຊຳລະ
ຕົວຂອງພວກເຂົາໃຫ້ບໍລິສຸດເພື່ອຈະນຳຫີບຄຳສັນຍາຂອງພະຜູ້ ເປັນເຈົ້າ ພຣະເຈົ້າ ຂອງ ອິສຣາ-
ເອນ ຂຶ້ນໄປ [15]ຄົນ ເລວີ ໄດ້ຫາມຫີບຂອງ ພຣະເຈົ້າ ເທິງບ່າດ້ວຍຄານຫາມຕາມທີ່ ໂມເຊ ໄດ້ສັ່ງ
ພວກເຂົາໄວ້ໃນພຣະທຳຂອງ ພຣະຜູ້ເປັນເຈົ້າ
[16]ດາວິດ ໄດ້ສັ່ງແກ່ບັນດາຫົວໜ້າຂອງຄົນ ເລວີ ໃຫ້ແຕ່ງຕັ້ງພວກພີ່ນ້ອງຂອງພວກເຂົາໃຫ້ເປັນ

ນັກຮ້ອງ ຫລິ້ນເຄື່ອງດົນຕີ ມີພິນໃຫຍ່ ພິນຄູ່ ແລະແຊ່ງ ເພື່ອເຮັດສຽງດັງດ້ວຍສຽງໂຫ່ຮ້ອງ
ມ່ວນຊື່ນຍິນດີ [17]ຄົນ ເລວີ ຈຶ່ງແຕ່ງຕັ້ງ ເຮມານ ລູກຊາຍ ໂຢເອນ ແລະພີ່ນ້ອງຂອງລາວຄື ອາສັບ
ລູກຊາຍ ເບເຣກີຢາ ແລະຈາກລູກຫລານ ເມຣາຣີພີ່ນ້ອງຂອງພວກເຂົາຄື ເອທານ ລູກຊາຍ ກູ-
ຊາຢາ [18]ພ້ອມກັບພວກເຂົານັ້ນຍັງໄດ້ແຕ່ງຕັ້ງພີ່ນ້ອງຂອງພວກເຂົາໃນອັນດັບທີສອງຄື ເຊຄາຣິ-
ຢາ, ເບັນ, ຢາອາຊີເອນ ເຊມີຣາໂມດ, ເຢຮີເອນ, ອຸນນີ, ເອລີອາບ, ເບນາຢາ, ມາອາເສ-
ຢາ, ມັດຕີທີຢາ, ເອລີເຟເລຮູ, ມິກເນຢາ ກັບໂອເບັດເອໂດມ ແລະ ເຢອີເອນ ເປັນຄົນເຝົ້າ
ຍາມປະຕູ

[19]ຈຳພວກນັກຮ້ອງມີຄື ເຮມານ, ອາສັບ, ເອທານ ຊຶ່ງເປັນຄົນຕີແຊ່ງທອງເຫລືອງ [20]ເຊ-
ຄາຣີຢາ, ອາຊີເອນ, ເຊມີຣາໂມດ, ເຢຮີເອນ, ອຸນນີ, ເອລີອາບ, ມາອາເສຢາ ແລະເບນາຢາ
ຫລິ້ນພິນໃຫຍ່ຕາມສຳນຽງອາລາໂມດ [21]ແຕ່ມັດຕີທີຢາ, ເອລີເຟເລຮູ, ມິກເນຢາ, ໂອເບັດເອ-
ໂດມ, ເຢອີເອນ ແລະອາຊາຊີຢາ ເປັນຜູ້ນຳການຫລິ້ນພິນຄູ່ຕາມສຳນຽງເຊມີນິດ [22]ເກນານີ-
ຢາ ຫົວໜ້າຂອງຄົນ ເລວີ ໃນເລື່ອງເພງເປັນຜູ້ອຳນວຍການດ້ານເພງ ເພາະລາວເຂົ້າໃຈ ແລະ
ຊຳນານດີ [23]ເບເຣກີຢາ, ເອນການາ ເປັນຜູ້ເຝົ້າປະຕູຫີບຄຳສັນຍາ [24]ປະໂລຫິດ ເຊບານີຢາ,
ໂຢຊາຟັດ, ເນທາເນນ, ອາມາສາຍ, ເຊຄາຣີຢາ, ເບນາຢາ ແລະເອລີເອເຊ ໄດ້ເປົ່າແກຕໍ່ໜ້າ
ຫີບຄຳສັນຍາຂອງພຣະເຈົ້າ ແລະໂອເບັດເອໂດມ ກັບ ເຢຮີຢາເປັນຜູ້ເຝົ້າປະຕູຫີບຄຳສັນຍາ

## ດາວິດໄດ້ນຳຫີບຄຳສັນຍາຂຶ້ນໄປຍັງກຸງເຢຣູຊາເລັມ

[25]ດາວິດ ແລະບັນດາພວກເຖົ້າແກ່, ພວກຜູ້ປົກຄອງຂອງອິສຣາເອນ ແລະຜູ້ບັນຊາກອງ-
ພັນໄດ້ໄປນຳເອົາຫີບຄຳໝັ້ນສັນຍາຂອງພຣະຜູ້ເປັນເຈົ້າຂຶ້ນມາຈາກເຮືອນຂອງໂອເບັດເອໂດມ
ດ້ວຍຄວາມຊົມຊື່ນຍິນດີ [26]ຢູ່ມາ ເມື່ອພຣະເຈົ້າໄດ້ຊ່ວຍຄົນ ເລວີ ຜູ້ຫາມຫີບຄຳສັນຍາຂອງ
ພຣະຜູ້ເປັນເຈົ້າໄປ ພວກເຂົາກໍໄດ້ຖວາຍເຄື່ອງບູຊາ ມີລູກງົວເຖິກເຈັດໂຕ ແລະແກະຜູ້ເຈັດໂຕ
[27]ດາວິດ ໄດ້ນຸ່ງເຄື່ອງຜ້າປ່ານເນື້ອລະອຽດ ເໝືອນກັບພວກຄົນ ເລວີ ທີ່ໄດ້ຫາມຫີບຄຳສັນຍາ
ແລະພວກນັກຮ້ອງ ເກນານີຢາເປັນຜູ້ນຳດ້ານດົນຕີໃຫ້ແກ່ນັກຮ້ອງ ສ່ວນກະສັດດາວິດໄດ້ນຸ່ງ
ເສື້ອເອໂຟດຜ້າປ່ານໂຕໜຶ່ງ [28]ດັ່ງນີ້ແຫລະ ຄົນອິສຣາເອນທັງປວງໄດ້ນຳຫີບຄຳສັນຍາຂອງ
ພຣະຜູ້ເປັນເຈົ້າຂຶ້ນໄປດ້ວຍສຽງໂຫ່ຮ້ອງຍິນດີ ສຽງເປົ່າເຂົາສັດ, ສຽງແກ ແລະສຽງແຊ່ງພ້ອມ
ດ້ວຍດີດພິນໃຫຍ່ ແລະພິນຄູ່

## ມີການນະເຫສີຂອງກະສັດດາວິດໝິ່ນປະໝາກພະອົງ

[29]ແລະຕໍ່ມາເມື່ອຫີບຄຳສັນຍາຂອງພຣະຜູ້ເປັນເຈົ້າມາເຖິງນະຄອນດາວິດແລ້ວ ມີການລູກ
ສາວຂອງຊາອູນ ຫລຽວຊ່ອງເບິ່ງທາງປ່ອງຢ້ຽມ ເຫັນກະສັດ ດາວິດ ເຕັ້ນລຳ ແລະຊື່ນຊົມຍິນດີ
ນາງກໍມີໃຈໝິ່ນປະໝາດພະອົງ

# ບົດທີ 16

## ຄົນອິສຣາເອນຖວາຍເຄື່ອງບູຊາ ແລະຈັດງານລ້ຽງສະຫລອງ ເພາະໄດ້ນຳຫີບຂອງພຣະເຈົ້າມາຮອດແລ້ວ

1ແລະພວກເຂົາໄດ້ນຳຫີບຄຳສັນຍາຂອງ ພຣະເຈົ້າ ເຂົ້າມາວາງໄວ້ພາຍໃນເຕັນຊຶ່ງ ດາວິດ ໄດ້
ຈັດຕຽມໄວ້ສຳລັບຫີບນັ້ນ ແລະພວກເຂົາໄດ້ຖວາຍເຄື່ອງເຜົາບູຊາແລະເຄື່ອງບູຊາເພື່ອຄວາມ
ສາມັກຄີທຳຕໍ່ພຣະພັກ ພຣະເຈົ້າ 2ເມື່ອ ດາວິດ ໄດ້ຖວາຍເຄື່ອງເຜົາບູຊາ ແລະເຄື່ອງບູຊາເພື່ອ
ຄວາມສາມັກຄີທຳສຳເລັດແລ້ວ ພະອົງໄດ້ອວຍພອນປະຊາຊົນໃນພຣະນາມຂອງ ພຣະຜູ້ເປັນ-
ເຈົ້າ 3ແລະໄດ້ແຈກເຂົ້າຈີ່ຄົນລະກ້ອນ, ຊີ້ນຄົນລະສ່ວນ, ນ້ຳອະງຸ່ນ ແລະອະງຸ່ນແຫ້ງຄົນລະ
ອັນ ແກ່ບັນດາປະຊາຊົນ ອິສຣາເອນທັງຊາຍ ແລະຍິງ 4ພະອົງໄດ້ຕັ້ງຄົນ ເລວີບາງຄົນໃຫ້
ເປັນຜູ້ບົວລະບັດຕໍ່ໜ້າຫີບຄຳສັນຍາຂອງ ພຣະຜູ້ເປັນເຈົ້າ ແລະໃຫ້ລະນຶກເຖິງ ການຖວາຍໂມ-
ທະນາ ແລະຍົກຍໍສັນລະເສີນ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງ ອິສຣາເອນ. 5ໂດຍແມ່ນ ອາສັບ
ເປັນຫົວໜ້າ ແລະ ເຊຄາຣີຢາ ເປັນຜູ້ຮອງ, ເຢອີເອນ, ເຊມີຣາໂມດ, ເຢຮີເອນ, ມັດຕີທີຢາ,
ເອລີອາບ ເບນາຢາ, ໂອເບັດເອໂດມ ແລະ ເຢອີເອນ ຜູ້ຊຶ່ງຈະຫລິ້ນພິນໃຫຍ່ ແລະພິນຄູ່
ສ່ວນ ອາສັບ ເປັນຄົນຕີແຊ່ງ 6ປະໂລຫິດ ເບນາຢາ ແລະ ຢາຮາຊີເອນ ຈະເປົ່າແກຢູ່ເລື້ອຍໆຕໍ່-
ໜ້າຫີບຄຳສັນຍາຂອງ ພຣະເຈົ້າ ເປັນເພງໂມທະນາຖວາຍແດ່ ພຣະຜູ້ເປັນເຈົ້າ

7ແລ້ວໃນມື້ນັ້ນ ດາວິດ ໄດ້ກຳນົດ ເປັນເທື່ອທຳອິດ ໃຫ້ມີການຮ້ອງເພງໂມທະນາຖວາຍແດ່
ພຣະຜູ້ເປັນເຈົ້າ ໂດຍ ອາສັບ ແລະພວກພີ່ນ້ອງຂອງເພິ່ນ:

8 “ຈົ່ງໂມທະນາຂອບຄຸນ ພຣະຜູ້ເປັນເຈົ້າ
ຈົ່ງຮ້ອງທູນອອກພຣະນາມພຣະອົງ
ຈົ່ງໃຫ້ບັນດາພຣະລາຊະກິດຂອງພຣະອົງ
ປະກົດແຈ້ງແກ່ທ່າມກາງຊົນຊາດທັງຫລາຍ
9 ຈົ່ງຮ້ອງເພງຖວາຍພຣະອົງ ຮ້ອງເພງສັນລະເສີນຖວາຍພຣະອົງ
ຈົ່ງເວົ້າເຖິງການມະຫັດສະຈັນທັງໝົດຂອງພຣະອົງ
10 ຈົ່ງອວດພຣະນາມອັນບໍລິສຸດຂອງພຣະອົງ
ໃຫ້ຈິດໃຈຂອງບັນດາຜູ້ທີ່ສະແຫວງຫາ ພຣະຜູ້ເປັນເຈົ້າ ຊົມຊື່ນຍິນດີ
11 ຈົ່ງຊອກຫາ ພຣະຜູ້ເປັນເຈົ້າ ແລະພຣະກຳລັງຂອງພຣະອົງ
ຊອກຫາພຣະພັກຂອງພຣະອົງເລື້ອຍໆໄປ
12 ຈົ່ງລະນຶກເຖິງການອັດສະຈັນຊຶ່ງພຣະອົງໄດ້ກະທຳ, ການມະຫັດສະຈັນ
ແລະຄຳພິພາກສາທັງປວງທີ່ອອກມາຈາກພຣະໂອດຂອງພຣະອົງ
13 ໂອ ທ່ານທັງຫລາຍຜູ້ເປັນເຊື້ອສາຍຂອງ ອິສຣາເອນ ຜູ້ເປັນຂ້າໃຊ້ຂອງພຣະອົງ,
ຜູ້ເປັນລູກຫລານຂອງ ຢາໂຄບ ທີ່ພຣະອົງໄດ້ຊົງເລືອກໄວ້
14 ພຣະອົງຄື ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງເຮົາ
ຄຳພິພາກສາທັງຫລາຍຂອງພຣະອົງກໍຢູ່ທົ່ວໄປໃນແຜ່ນດິນໂລກ

15 ຈົ່ງຈົດຈຳຄຳສັນຍາຂອງພຣະອົງຕະຫລອດໄປເປັນນິດ
ຈົ່ງຈົດຈຳພຣະທຳທີ່ພຣະອົງໄດ້ບັນຊາສັ່ງໄວ້ຕະຫລອດຊົ່ວອາຍຸໜຶ່ງພັນ
16 ຄືຄຳສັນຍາຊຶ່ງພຣະອົງໄດ້ສັນຍາໄວ້ກັບ ອັບຣາຮາມ
ແລະຄຳປະຕິຍານຊຶ່ງໄດ້ໃຫ້ໄວ້ກັບ ອີຊາກ
17 ຊຶ່ງພຣະອົງໄດ້ຢືນຢັນໄວ້ອີກກັບ ຢາໂຄບ
ໃຫ້ເປັນພຣະບັນຍັດສຳລັບ ອິສຣາເອນ
ແລະໃຫ້ເປັນຄຳໝັ້ນສັນຍາຕະຫລອດໄປເປັນນິດ
18 ພຣະອົງໄດ້ກ່າວວ່າ ‘ເຮົາຈະມອບແຜ່ນດິນ ການາອານ ໃຫ້ແກ່ເຈົ້າ
ຊຶ່ງເປັນມໍລະດົກຂອງພວກເຈົ້າ’
19 ເມື່ອເຈົ້າທັງຫລາຍຍັງບໍ່ທັນມີຫລາຍຄົນ
ຊຶ່ງມີຈຳນວນນ້ອຍກໍຈິງ ແລະເປັນຄົນທີ່ອາໄສຢູ່ໃນແຜ່ນດິນນັ້ນ
20 ແລະພວກເຂົາໄດ້ເດີນທາງຈາກປະເທດນີ້ໄປປະເທດນັ້ນ
ຈາກລາຊະອານາຈັກນີ້ໄປຫາອີກຊົນຊາດໜຶ່ງ
21 ພຣະອົງບໍ່ຍອມໃຫ້ຜູ້ໃດບີບບັງຄັບພວກເຂົາ,
ພຣະອົງໄດ້ນາບຂູ່ກະສັດຫລາຍອົງເພື່ອເຫັນແກ່ພວກເຂົາ
22 ວ່າ ‘ຢ່າແຕະຕ້ອງບັນດາຜູ້ທີ່ເຮົາໄດ້ເຈີມຕັ້ງໄວ້
ແລະຢ່າເຮັດອັນຕະລາຍແກ່ຜູ້ທຳນວາຍທັງຫລາຍຂອງເຮົາ’
23 ແຜ່ນດິນໂລກທັງໝົດຈົ່ງຮ້ອງເພງຖວາຍ ພຣະຜູ້ເປັນເຈົ້າ
ຈົ່ງປະກາດຄວາມພົ້ນຂອງພຣະອົງທຸກໆມື້
24 ຈົ່ງເວົ້າເຖິງສະຫງ່າລາສີຂອງພຣະອົງໃນທ່າມກາງບັນດາປະຊາຊາດ
ເຖິງບັນດາກິດຈະການທີ່ອັດສະຈັນຂອງພຣະອົງ
ທ່າມກາງບັນດາຊົນຊາດທັງຫລາຍ
25 ເພາະ ພຣະຜູ້ເປັນເຈົ້າ ນັ້ນຍິ່ງໃຫຍ່
ແລະສົມຄວນທີ່ຈະສັນລະເສີນຢ່າງໃຫຍ່ຫລວງ
ພຣະອົງເປັນທີ່ຢຳເກງເໜືອພະທັງປວງ
26 ເພາະພະທັງປວງຂອງຊົນຊາດທັງຫລາຍເປັນພຽງຮູບເຄົາລົບ
ແຕ່ ພຣະຜູ້ເປັນເຈົ້າ ໄດ້ເປັນຜູ້ສ້າງຟ້າສະຫວັນ
27 ລິດທານຸພາບ ແລະລັດສະໝີທີ່ຮຸ່ງເຮືອງກໍຢູ່ຕໍ່ພຣະພັກພຣະອົງ
ລິດເດດ ແລະຄວາມຍິນດີກໍຢູ່ໃນສະຖານທີ່ປະທັບຂອງພຣະອົງ
28 ຕະກູນແຫ່ງຊົນຊາດທັງຫລາຍເອີຍ ຈົ່ງຖວາຍແດ່ ພຣະຜູ້ເປັນເຈົ້າ
ຈົ່ງຖວາຍສະຫງ່າລາສີ ແລະລິດເດດແດ່ ພຣະຜູ້ເປັນເຈົ້າ
29 ຈົ່ງຖວາຍສະຫງ່າລາສີແຫ່ງນາມຊື່ຂອງພຣະອົງແດ່ ພຣະຜູ້ເປັນເຈົ້າ
ຈົ່ງນຳເອົາເຄື່ອງຖວາຍມາ ແລະຈົ່ງເຂົ້າເຝົ້າຕໍ່ພຣະພັກພຣະອົງ

ຈົ່ງນ້ອມນະມັດສະການ ພຣະຜູ້ເປັນເຈົ້າ ໃນລັດສະໝີອັນຮຸ່ງເຮືອງແຫ່ງຄວາມບໍລິສຸດ
30 ຊາວໂລກທັງໝົດເອີຍ ຈົ່ງຢ້ານຈົນຕົວສັ່ນຕໍ່ພຣະພັກພຣະອົງ!
ໂລກຖືກສະຖາປະນາແລ້ວຈະບໍ່ຫວັ່ນໄຫວເລີຍ
31 ຂໍໃຫ້ຟ້າສະຫວັນຍິນດີ ແລະແຜ່ນດິນໂລກຊື່ນຊົມຍິນດີ
ແລະໃຫ້ມະນຸດເວົ້າໃນໝູ່ບັນດາປະຊາຊາດວ່າ 'ພຣະຜູ້ເປັນເຈົ້າຊົງຄອບຄອງ'
32 ຂໍໃຫ້ນ້ຳທະເລ ແລະທຸກໆສິ່ງທີ່ຢູ່ໃນບ່ອນນັ້ນຮ້ອງສຽງດັງ,
ຂໍໃຫ້ທົ່ງນາພ້ອມກັບທຸກສິ່ງທຸກຢ່າງທີ່ຢູ່ໃນບ່ອນນັ້ນຊົມຊື່ນຍິນດີ
33 ແລ້ວຕົ້ນໄມ້ທັງໝົດໃນປ່າດົງຈະຮ້ອງເພງດ້ວຍຄວາມຍິນດີຢູ່ຕໍ່ພຣະພັກ ພຣະຜູ້ເປັນເຈົ້າ
ເພາະວ່າພຣະອົງສະເດັດມາ ເພື່ອພິພາກສາໂລກ
34 ໂອ ຈົ່ງໂມທະນາພຣະຄຸນ ພຣະຜູ້ເປັນເຈົ້າ ເພາະພຣະອົງດີປະເສີດ
ເພາະຄວາມເມດຕາຂອງພຣະອົງກໍດຳລົງຢູ່ເປັນນິດ
35 ແລະທ່ານຈົ່ງກ່າວວ່າ 'ຂ້າແດ່ ພຣະເຈົ້າ ແຫ່ງຄວາມພົ້ນຂອງຂ້າພະອົງທັງຫລາຍ
ຂໍຈົ່ງຊ່ວຍຂ້າພະອົງທັງຫລາຍໃຫ້ຫລຸດພົ້ນ
ແລະໂຜດຮວບຮວມເອົາຂ້າພະອົງທັງຫລາຍ
ແລະຊ່ວຍຂ້າພະອົງທັງປວງໃຫ້ພົ້ນຈາກປະຊາຊາດທັງຫລາຍ
ເພື່ອຂ້າພະອົງທັງຫລາຍຈະໂມທະນາຂອບພຣະຄຸນພະນາມຊື່ອັນບໍລິສຸດຂອງພຣະອົງ
ແລະຈະໄດ້ຍົກຍໍດ້ວຍການສັນລະເສີນພຣະອົງ'
36 ຂໍໃຫ້ພຣະຜູ້ເປັນເຈົ້າ ພຣະເຈົ້າຂອງ ອິສຣາເອນ
ເປັນທີ່ສັນລະເສີນຕັ້ງແຕ່ຄາວຜ່ານມາແລ້ວ
ຈົນເຖິງຄາວພາຍໜ້າສືບໆໄປເປັນນິດ"
ແລ້ວປະຊາຊົນທັງປວງໄດ້ກ່າວວ່າ "ອາແມນ"
ແລະໄດ້ສັນລະເສີນ ພຣະຜູ້ເປັນເຈົ້າ

37ດາວິດ ຈຶ່ງໄດ້ໃຫ້ ອາສັບ ແລະພີ່ນ້ອງຂອງ ເພິ່ນຢູ່ໃນບ່ອນນັ້ນຕໍ່ໜ້າຫີບຄຳສັນຍາຂອງ
ພຣະຜູ້ເປັນເຈົ້າ ໃຫ້ບົວລະບັດຢູ່ຕໍ່ໜ້າຫີບນັ້ນເລື້ອຍໄປຕາມວຽກງານປະຈຳວັນທີ່ຈະຕ້ອງເຮັດ
38ພ້ອມທັງ ໂອເບັດ ເອໂດມ ແລະພີ່ນ້ອງຫົກສິບແປດຄົນຂອງເພິ່ນນຳ; ຝ່າຍ ໂອເບັດ ເອໂດມ,
ລູກຊາຍ ເຢດູທູນ ກັບ ໂຮສາ ໃຫ້ເປັນຄົນເຝົ້າປະຕູ 39ດາວິດ ໄດ້ໃຫ້ປະໂລຫິດຊາໂດກ ກັບພີ່-
ນ້ອງຂອງເພິ່ນຜູ້ເປັນປະໂລຫິດ ຢູ່ໜ້າຫໍເຕັນຂອງ ພຣະຜູ້ເປັນເຈົ້າ ຊຶ່ງຢູ່ບ່ອນສູງໃນເມືອງ ກິເບ-
ໂອນ 40ເພື່ອຈະຖວາຍເຄື່ອງເຜົາບູຊາແດ່ ພຣະຜູ້ເປັນເຈົ້າ ເທິງແທ່ນເຄື່ອງເຜົາບູຊາໃນຕອນເຊົ້າ
ແລະຕອນແລງສະເໝີ ຕາມທີ່ໄດ້ບັນທຶກໄວ້ໃນພຣະບັນຍັດຂອງ ພຣະຜູ້ເປັນເຈົ້າ ຊຶ່ງພຣະອົງ
ໄດ້ສັ່ງແກ່ຊາວ ອິສຣາເອນ 41ແລະຢູ່ກັບພວກເຂົາຍັງມີ ເຮມານ, ເຢດູທູນ ແລະບັນດາຄົນທີ່ຖືກ
ເລືອກຈາກຈຳນວນຄົນທີ່ຖືກເລືອກ ແລະບົ່ງຊື່ໄວ້ ໃຫ້ຖວາຍໂມທະນາພຣະຄຸນແດ່ ພຣະຜູ້ເປັນ-
ເຈົ້າ ເພາະຄວາມເມດຕາຂອງພຣະອົງດຳລົງຢູ່ເປັນນິດນິລັນດອນ 42ເຮມານ ແລະ ເຢດູທູນ ໄດ້
ຖືແກ ແລະແຊ່ງເພື່ອບັນເລງເພງ ແລະເຄື່ອງດົນຕີຕ່າງໆປະກອບເພງຖວາຍ ພຣະເຈົ້າ ສ່ວນ

ລູກຫລານຂອງ ເຢດູທູນ ໄດ້ຮັບແຕ່ງຕັ້ງໃຫ້ປະຈຳຢູ່ທີ່ປະຕູ
[43]ແລະປະຊາຊົນທັງປວງຕ່າງກໍກັບ ເມືອ ເຮືອນຂອງຕົນທຸກຄົນ ແລະ ດາວິດ ກໍສະເດັດກັບ
ເມືອເພື່ອອວຍພອນແດ່ຄອບຄົວຂອງພະອົງ.

# ບົດທີ 17

## ດາວິດປາດຖະໜາຢາກຈະສ້າງພຣະວິຫານຂອງພຣະເຈົ້າ[ກ]

[1]ຢູ່ມາເມື່ອ ດາວິດ ປະທັບໃນພະລາຊະວັງຂອງພະອົງ ດາວິດ ກ່າວກັບຜູ້ທຳນວາຍ ນາທານ ວ່າ
"ເບິ່ງແມ ເຮົາຢູ່ໃນ ເຮືອນ ເຮັດດ້ວຍ ໄມ້ສົນ ແຕ່ຫີບຄຳສັນຍາຂອງ ພຣະຜູ້ເປັນເຈົ້າ ຢູ່ພາຍ ໃຕ້ຜ້າ
ເຕັນ" [2]ແລະ ນາທານ ໄດ້ຕອບ ດາວິດ ວ່າ "ຂໍພະອົງໄດ້ເຮັດຕາມຄວາມປະສົງຂອງພະອົງເຖີດ
ເພາະ ພຣະເຈົ້າ ໄດ້ສະຖິດຢູ່ກັບພະອົງແລ້ວ"
[3]ແຕ່ຢູ່ມາໃນຄືນມື້ນັ້ນເອງ ພຣະທຳຂອງ ພຣະເຈົ້າ ໄດ້ມາເຖິງ ນາທານ ວ່າ [4]"ຈົ່ງໄປບອກ ດາ-
ວິດ ຜູ້ຮັບ ໃຊ້ຂອງ ເຮົາວ່າ 'ພຣະຜູ້ເປັນເຈົ້າ ກ່າວດັ່ງນີ້ວ່າ ເຈົ້າຢ່າສ້າງ ພຣະວິຫານ ໃຫ້ ເຮົາຢູ່
[5]ເພາະ ເຮົາບໍ່ ເຄີຍຢູ່ໃນວິຫານນັບ ແຕ່ມື້ທີ່ ເຮົາ ໄດ້ ໃຫ້ພວກ ອິສຣາເອນ ຂຶ້ນມາຈົນ ເຖິງທຸກມື້ນີ້ ແຕ່
ເຮົາໄດ້ຍ້າຍຈາກເຕັນນີ້ໄປເຕັນນັ້ນ ແລະຈາກຫໍເຕັນແຫ່ງນີ້ໄປຫໍເຕັນແຫ່ງນັ້ນ [6]ໃນບ່ອນຕ່າງໆ
ທີ່ເຮົາເຄື່ອນໄປມາກັບ ອິສຣາເອນ ທັງໝົດ ເຮົາບໍ່ໄດ້ເຄີຍເວົ້າຈັກຄຳກັບຜູ້ພິພາກສາຂອງ ອິສຣາ-
ເອນ ຄົນໃດຄົນໜຶ່ງທີ່ເຮົາໄດ້ສັ່ງໃຫ້ເຂົາລ້ຽງດູຮັກສາປະຊາຊົນຂອງເຮົາວ່າ "ເປັນຫຍັງເຈົ້າບໍ່
ໄດ້ສ້າງວິຫານດ້ວຍໄມ້ສົນສີດາໃຫ້ແກ່ເຮົາ?'"

## ຄຳສັນຍາລະຫວ່າງພຣະເຈົ້າກັບດາວິດ[ຂ]

[7]ເຫດສະນັ້ນ ບັດນີ້ເຈົ້າຈົ່ງກ່າວ ແກ່ ດາວິດ ຜູ້ຮັບໃຊ້ຂອງເຮົາວ່າ 'ພຣະຜູ້ເປັນເຈົ້າ ແຫ່ງຈັກ-
ກະວານກ່າວວ່າເຮົາໄດ້ເອົາເຈົ້າອອກມາຈາກທົ່ງຫຍ້າ ຈາກການຕາມຝູງແບ້ຝູງແກະ ເພື່ອໃຫ້
ເຈົ້າເປັນເຈົ້ານາຍປົກຄອງ ອິສຣາເອນ ປະຊາຊົນຂອງເຮົາ [8]ແລະເຮົາໄດ້ສະຖິດຢູ່ກັບເຈົ້າໃນທຸກ
ບ່ອນທີ່ເຈົ້າໄປ ໄດ້ຕັດບັນດາສັດຕູຂອງເຈົ້າອອກໃຫ້ໜີຕໍ່ໜ້າເຈົ້າ ແລະເຮົາໄດ້ເຮັດໃຫ້ເຈົ້າມີຊື່
ສຽງ ໃຫຍ່ ໂຕ ເໝືອນກັບຊື່ສຽງຂອງຜູ້ຍິ່ງ ໃຫຍ່ທີ່ຢູ່ ເທິງ ແຜ່ນດິນ ໃນ ໂລກ [9]ແລະ ເຮົາ ຈະກຳນົດ
ບ່ອນຢູ່ສຳລັບ ອິສຣາເອນ ປະຊາຊົນຂອງເຮົາ ເຮົາຈະປູກຝັງພວກເຂົາໄວ້ເພື່ອພວກເຂົາ ຈະໄດ້
ຢູ່ໃນບ່ອນຂອງພວກເຂົາເອງ ແລະຈະບໍ່ຖືກກົດຂີ່ຂົ່ມເຫັງອີກຕໍ່ໄປ ແລະພວກລູກຂອງຄົນຊົ່ວ
ຮ້າຍຈະບໍ່ມາປຸ້ນໂຈມຕີພວກເຂົາຄືດັ່ງແຕ່ກ່ອນຜ່ານມາ [10]ຕັ້ງແຕ່ຄາວທີ່ເຮົາຕັ້ງຜູ້ພິພາກສາໄວ້
ປົກຄອງ ອິສຣາເອນ ປະຊາຊົນຂອງເຮົາ, ເຮົາຈະປາບປາມສັດຕູທັງໝົດ ຂອງເຈົ້າລົງ ຫລາຍ
ໄປກວ່ານັ້ນອີກ ເຮົາກ່າວແກ່ເຈົ້າວ່າ ພຣະຜູ້ເປັນເຈົ້າ ຈະໃຫ້ເຈົ້າມີເຊື້ອສາຍສືບໆໄປ [11]ແລະຢູ່
ມາເມື່ອມື້ທັງຫລາຍຂອງເຈົ້າຄົບແລ້ວ ເຈົ້າຕ້ອງໄປຢູ່ກັບບັນພະບູລຸດຂອງເຈົ້າ ເຮົາຈະໃຫ້ເຊື້ອ-
ສາຍຂອງເຈົ້າທີ່ມາພາຍຫລັງເຈົ້າເກີດຂຶ້ນ ຜູ້ຊຶ່ງຈະເປັນລູກຊາຍຄົນໜຶ່ງຂອງເຈົ້າເອງ ແລະເຮົາ
ຈະສະຖາປະນາອານາຈັກຂອງລາວ [12]ຜູ້ນັ້ນຈະເປັນຜູ້ສ້າງວິຫານສຳລັບເຮົາ ແລະເຮົາຈະໃຫ້
ບັນລັງຂອງລາວຕັ້ງໝັ້ນຄົງຢູ່ເປັນນິດ [13]ຝ່າຍເຮົາຈະເປັນພໍ່ຂອງລາວ ແລະລາວຈະເປັນບຸດ

[ກ]2 ຊາມູເອນ 7:1-24 [ຂ]2 ຊາມູເອນ 7:4-17

ຂອງເຮົາ ເຮົາຈະບໍ່ນຳຄວາມເມດຕາຂອງເຮົາອອກໄປຈາກລາວ ເໝືອນຢ່າງທີ່ເຮົາໄດ້ເອົາອອກ
ໄປຈາກຄົນທີ່ຢູ່ກ່ອນເຈົ້ານັ້ນ [14]ແຕ່ເຮົາຈະຕັ້ງລາວໄວ້ໃນວິຫານຂອງເຮົາ ແລະໃນອານາຈັກ
ຂອງເຮົາຕະຫລອດໄປເປັນນິດ, ບັນລັງຂອງລາວຈະຕັ້ງໝັ້ນຄົງຢູ່ຕະຫລອດໄປ'" [15]ນາທານກໍ
ກາບທູນດາວິດຕາມຖ້ອຍຄຳທັງປວງເຫລົ່ານີ້ແລະຕາມນິມິດທັງໝົດ

## ຄຳອະທິຖານ ແລະຄຳສັນລະເສີນຂອງດາວິດ[ກ]

[16]ແລ້ວກະສັດດາວິດກໍສະເດັດເຂົ້າໄປ ແລະນັ່ງລົງຕໍ່ພຣະພັກພຣະຜູ້ເປັນເຈົ້າ ແລະກາບ
ທູນວ່າ "ຂ້າແດ່ພຣະຜູ້ເປັນເຈົ້າ ພຣະເຈົ້າອົງຍິ່ງໃຫຍ່ ຂ້າພະອົງແມ່ນຜູ້ໃດນໍ ແລະເຊື້ອສາຍ
ຂອງຂ້າພະອົງທີ່ພຣະອົງໄດ້ນຳມາໄກຈົນເຖິງບ່ອນນີ້? [17]ຂ້າແດ່ພຣະເຈົ້າ ສິ່ງນີ້ເປັນຂອງເລັກ
ນ້ອຍໃນສາຍພຣະເນດຂອງພຣະອົງ ເພາະພຣະອົງໄດ້ກ່າວເຖິງເຊື້ອສາຍຂ້າໃຊ້ຂອງພຣະອົງ
ໃນອະນາຄົດອັນໄກນັ້ນ ແລະໄດ້ຫລຽວເບິ່ງຂ້າພະອົງວ່າ ຂ້າພະອົງມີຖານະສູງ ຂ້າແດ່ພຣະຜູ້-
ເປັນເຈົ້າພຣະເຈົ້າອົງສູງສຸດ [18]ແລະດາວິດຈະກ່າວທູນສິ່ງໃດອີກແກ່ພຣະອົງໃນເລື່ອງກຽດຕິ-
ຍົດທີ່ໄດ້ປະທານແກ່ຜູ້ຮັບໃຊ້ຂອງພຣະອົງ ເພາະພຣະອົງຮູ້ຈັກຜູ້ຮັບໃຊ້ຂອງພຣະອົງ [19]ຂ້າແດ່
ພຣະຜູ້ເປັນເຈົ້າ ພຣະອົງໄດ້ກະທຳການອັນຍິ່ງໃຫຍ່ທັງໝົດເຫລົ່ານີ້ ເພື່ອເຫັນແກ່ຜູ້ຮັບໃຊ້ຂອງ
ພຣະອົງ ແລະຕາມນ້ຳພຣະໄທຂອງພຣະອົງເອງ ເພື່ອຈະເຮັດໃຫ້ສິ່ງທີ່ຍິ່ງໃຫຍ່ນີ້ເປັນທີ່ຮູ້ກັນທົ່ວ
ໄປ [20]ຂ້າແດ່ພຣະຜູ້ເປັນເຈົ້າ ບໍ່ມີຜູ້ໃດສະເໝີເໝືອນກັບພຣະອົງ ແລະບໍ່ມີພະອື່ນໃດນອກຈາກ
ພຣະອົງ ຕາມທີ່ ຂ້າພະອົງທັງຫລາຍໄດ້ຍິນກັບຫູຂອງຂ້າພະອົງ [21]ແລະປະຊາຊາດໃດບໍ່
ເໝືອນກັບອິສຣາເອນປະຊາຊົນຂອງພຣະອົງ ແມ່ນຊາດດຽວທີ່ຢູ່ເທິງແຜ່ນດິນໂລກ ທີ່ພຣະອົງ
ສະເດັດໄປໄຖ່ໃຫ້ເປັນປະຊາຊົນຂອງພຣະອົງ ເພື່ອຈະເຮັດໃຫ້ພຣະນາມຂອງພຣະອົງຊ່າລືໄປ
ດ້ວຍກິດຈະການທີ່ຍິ່ງໃຫຍ່ອັນໜ້າຢ້ານ ແລະຢຳເກງໂດຍຂັບໄລ່ປະຊາຊາດທັງຫລາຍອອກໄປ
ໃຫ້ພົ້ນຕໍ່ໜ້າປະຊາຊົນຂອງພຣະອົງ ຜູ້ຊຶ່ງພຣະອົງໄດ້ໄຖ່ອອກມາຈາກປະເທດເອຢິບນັ້ນ
[22]ແລະພຣະອົງໄດ້ເອົາອິສຣາເອນປະຊາຊົນຂອງພຣະອົງມາເປັນປະຊາຊົນຂອງພຣະອົງຕະ-
ຫລອດໄປເປັນນິດ ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງກາຍເປັນພຣະເຈົ້າຂອງພວກເຂົາ [23]ຂ້າ
ແດ່ພຣະຜູ້ເປັນເຈົ້າ ບັດນີ້ຂໍໃຫ້ພຣະທຳຊຶ່ງພຣະອົງໄດ້ກ່າວໄວ້ກ່ຽວກັບຜູ້ຮັບໃຊ້ຂອງພຣະອົງ
ແລະກ່ຽວກັບເຊື້ອສາຍຂອງລາວ ຈົ່ງຕັ້ງໝັ້ນຄົງຢູ່ສືບໆໄປເປັນນິດແລະຂໍພຣະອົງໂຜດກະທຳ
ຕາມທີ່ພຣະອົງກ່າວໄວ້ແລ້ວນັ້ນເຖີດ [24]ຂໍໃຫ້ການນັ້ນຕັ້ງໝັ້ນຄົງຢູ່ ແລະຂໍໃຫ້ພຣະນາມຂອງ
ພຣະອົງເປັນທີ່ຍົກຍໍສັນລະເສີນຕະຫລອດໄປເປັນນິດ ແລະຂໍໃຫ້ພວກເຂົາເວົ້າວ່າ 'ພຣະຜູ້-
ເປັນເຈົ້າແຫ່ງຈັກກະວານເປັນພຣະເຈົ້າຂອງອິສຣາເອນ ພຣະອົງແມ່ນພຣະເຈົ້າສຳລັບພວກ
ອິສຣາເອນ' ແລະຂໍໃຫ້ເຊື້ອສາຍຂອງດາວິດຜູ້ຮັບໃຊ້ຂອງພຣະອົງຕັ້ງໝັ້ນຄົງຢູ່ຕໍ່ພຣະພັກຂອງ
ພຣະອົງເທີ້ນ [25]ເພາະວ່າ ຂ້າແດ່ພຣະເຈົ້າຂອງຂ້າພະອົງ ພຣະອົງໄດ້ສະແດງແກ່ຜູ້ຮັບໃຊ້ຂອງ
ພຣະອົງວ່າ ພຣະອົງຈະຕັ້ງເຊື້ອສາຍໃຫ້ລາວ ເຫດສະນັ້ນຜູ້ຮັບໃຊ້ຂອງພຣະອົງຈຶ່ງມີຄວາມກ້າ-
ຫານທີ່ຈະອະທິຖານຕໍ່ພຣະພັກພຣະອົງ [26]ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງເປັນພຣະເຈົ້າ ແລະ
ພຣະອົງໄດ້ສັນຍາສິ່ງທີ່ດີນີ້ໃຫ້ແກ່ຜູ້ຮັບໃຊ້ຂອງພຣະອົງ [27]ເພາະສະນັ້ນ ບັດນີ້ຂໍໃຫ້ເປັນທີ່ພໍ-

[ກ]2 ຊາມູເອນ 7:18-29

ພຣະໄທພຣະອົງທີ່ຈະໄດ້ອວຍພຣະພອນແກ່ເຊື້ອສາຍຂອງຜູ້ຮັບໃຊ້ຂອງພຣະອົງ ເພື່ອເຊື້ອສາຍນັ້ນຈະດຳລົງຢູ່ຕໍ່ພຣະພັກພຣະອົງຕະຫລອດໄປເປັນນິດ ເພາະວ່າ ພຣະຜູ້ເປັນເຈົ້າໄດ້ອວຍພຣະພອນໃຫ້ແກ່ພວກເຂົາ ແລະພວກເຂົາຈະມີພຣະພອນສືບໆເປັນໄປນິດ"

# ບົດທີ 18

## ລາຊະອານາຈັກຂອງດາວິດຖືກສະຖາປະນາຕັ້ງໄວ້ໃຫ້ໝັ້ນຄົງ[ກ]

[1]ແລະຢູ່ຕໍ່ມາ ດາວິດ ໄດ້ໂຈມຕີພວກ ຟີລິດສະຕິນ ແລະໄດ້ປາບປາມພວກເຂົາ ພ້ອມທັງຍຶດ
ເມືອງ ກັດ ແລະຊົນນະບົດຂອງເມືອງນັ້ນຈາກມືຂອງພວກ ຟີລິດສະຕິນ
[2]ແລະພຣະອົງໄດ້ໂຈມຕີ ໂມອາບ ຄົນ ໂມອາບ ໄດ້ກາຍເປັນຜູ້ຮັບໃຊ້ຂອງ ດາວິດ ແລະນຳ
ເອົາເຄື່ອງຖວາຍມາຖວາຍໃຫ້ແກ່ດາວິດ.
[3]ດາວິດ ໄດ້ໂຈມຕີຮາດັດເອເຊີ ກະສັດ ໂຊບາ ໃນເມືອງຮາມັດ ຂະນະທີ່ພະອົງກຳລັງສະເດັດ
ໄປຕັ້ງອຳນາດປົກຄອງຂອງພະອົງທີ່ແມ່ນ້ຳ ເອຟຣາດ [4]ແລະ ດາວິດ ໄດ້ຍຶດລົດຮົບໜຶ່ງພັນຄັນ
ພ້ອມທັງທະຫານມ້າເຈັດພັນຄົນ ແລະທະຫານລາບສອງໝື່ນຄົນ ອອກຈາກພະອົງ ແລະ ດາວິດ
ໄດ້ຕັດເອັນຂາມ້າລົດຮົບທັງໝົດ, ແຕ່ດາວິດ ໄດ້ຍຶດເອົາລົດມ້າໄວ້ໜຶ່ງຮ້ອຍຄັນ [5]ເມື່ອຄົນຊີເຣຍ
ແຫ່ງ ເມືອງ ດາມາເຊ ໄດ້ມາຊ່ວຍ ຮາດັດເອເຊີ ກະສັດ ແຫ່ງ ເມືອງ ໂຊບາ, ດາວິດ ໄດ້ປະຫານຄົນ
ຊີເຣຍ ສອງໝື່ນສອງພັນຄົນ [6]ແລ້ວ ດາວິດ ໄດ້ຕັ້ງທະຫານປະຈຳປ້ອມໄວ້ໃນຊີເຣຍ ເມືອງ ດາມາ-
ເຊ ແລະຄົນຊີເຣຍ ໄດ້ເປັນຜູ້ຮັບໃຊ້ຂອງ ດາວິດ ພວກເຂົາເປັນຜູ້ນຳເອົາເຄື່ອງຖວາຍມາຖວາຍ
ແກ່ພະອົງ, ພຣະຜູ້ເປັນເຈົ້າ ໄດ້ປະທານໄຊຊະນະໃຫ້ແກ່ພະອົງໃນທຸກທີ່ທຸກບ່ອນທີ່ພະອົງໄປ
[7]ດາວິດ ໄດ້ຍຶດໂລ່ທອງຄຳທີ່ເປັນຂອງຜູ້ຮັບໃຊ້ຂອງ ຮາດັດເອເຊີ ແລະໄດ້ນຳມາທີ່ເມືອງ ເຢຣູ-
ຊາເລັມ [8]ດາວິດ ໄດ້ຍຶດເອົາທອງເຫລືອງເປັນຈຳນວນຫລາຍຈາກເມືອງ ຕິບຮາດ ແລະຈາກ
ເມືອງ ກູນ ທີ່ເປັນຫົວເມືອງຂອງ ຮາດັດເອເຊີ, ຊຶ່ງ ໂຊໂລໂມນ ໄດ້ໃຊ້ເຮັດຊາມທະເລທອງ-
ເຫລືອງ ແລະເສົາທັງສອງ ພ້ອມກັບເຄື່ອງໃຊ້ທີ່ເປັນທອງເຫລືອງ
[9]ເມື່ອ ໂຕຍ ກະສັດ ແຫ່ງ ເມືອງ ຮາມັດ ໄດ້ຍິນວ່າ ດາວິດ ໄດ້ໂຈມຕີກອງທັບທັງໝົດຂອງ ຮາດັດ-
ເອເຊີ ກະສັດ ໂຊບາ ແລ້ວ [10]ພະອົງໄດ້ໃຊ້ ໂຢຣາມ ລູກຊາຍຂອງພະອົງ ໄປ ເຝົ້າກະສັດ ດາວິດ
ເພື່ອຈະຄຳນັບ ແລະຖວາຍພະພອນພະອົງທີ່ໄດ້ຮົບກັບຮາດາເດເຊ ໄດ້ຊະນະ (ເພາະວ່າ ຮາດາ-
ເດເຊ ໄດ້ສູ້ຮົບກັບ ໂຕຍ ເລື້ອຍໆ) ແລະກະສັດ ໂຕຍ ໄດ້ສົ່ງເຄື່ອງຕ່າງໆ ທີ່ເຮັດດ້ວຍທອງຄຳ,
ດ້ວຍເງິນ ແລະດ້ວຍທອງເຫລືອງໄປຖວາຍ ດາວິດ ນຳ [11]ກະສັດ ດາວິດ ໄດ້ຖວາຍສິ່ງເຫລົ່ານີ້
ແກ່ພຣະຜູ້ເປັນເຈົ້າພ້ອມກັບເງິນ ແລະທອງຄຳ ຊຶ່ງພະອົງໄດ້ນຳມາຈາກ ປະຊາຊາດທັງປວງ
ເຊັ່ນ: ຈາກ ເອໂດມ, ໂມອາບ, ລູກຫລານ ອຳໂມນ, ຄົນ ຟີລິດສະຕິນ ແລະຈາກພວກອຳອາ
ເລັກ
[12]ອາບີຊາຍ ລູກຊາຍນາງ ເຊຣູຢາ ໄດ້ໂຈມຕີພວກ ເອໂດມ ໜຶ່ງໝື່ນ ແປດພັນຄົນໃນຮ່ອມພູເຂົາ
ເກືອ [13]ແລະພະອົງຕັ້ງກອງທັບທະຫານໄວ້ໃນ ເອໂດມ ແລະຊາວ ເອໂດມ ທັງໝົດໄດ້ກາຍມາ

[ກ]2 ຊາມູເອນ 8:1-18

ເປັນຄົນຮັບໃຊ້ຂອງ ດາວິດ ແລະ ພຣະຜູ້ເປັນເຈົ້າໄດ້ປະທານໄຊຊະນະແກ່ດາວິດ ໃນທຸກທີ່ທຸກ
ບ່ອນທີ່ພະອົງໄປ ບໍ່ວ່າພະອົງຈະສະເດັດໄປບ່ອນໃດກໍຕາມ.
14ດາວິດ ຈຶ່ງໄດ້ປົກຄອງ ອິສຣາເອນ ທັງໝົດ ແລະພະອົງໄດ້ໃຫ້ຄວາມຍຸດຕິທຳ ກັບຄວາມ
ທ່ຽງທຳ ແກ່ປະຊາຊົນຂອງພະອົງທຸກຄົນ 15ໂຢອາບ ລູກຊາຍນາງ ເຊຣູຢາ ເປັນຜູ້ບັນຊາການ
ກອງທັບ ແລະ ເຢໂຮຊາຟັດ ລູກຊາຍ ອາຣີລຸດ ເປັນເຈົ້າກົມ ເອກກະສານຕ່າງໆ 16ຊາໂດກ ລູກ
ຊາຍ ອາຮີຕຸບ ແລະ ອາບີເມເລັກ ລູກຊາຍ ອາບີອາທາ ເປັນປະໂລຫິດ ແລະ ຊາວະຊາ ເປັນເລຂາ
17ເບນາຢາ ລູກຊາຍ ເຢໂຮຢາດາ ເປັນຫົວໜ້າຄຸມຄົນ ເກເຣັດ ແລະຄົນ ເປເລດ ກັບບັນດາລູກ
ຊາຍຂອງ ດາວິດກໍເປັນຫົວໜ້າໃນລາຊະການຂອງກະສັດ

# ບົດທີ 19

## ການສູ້ຮົບກັບລູກຫລານອຳໂມນ ແລະຄົນຊີເຣຍ[ກ]

1ຢູ່ຕໍ່ມາພາຍຫລັງຈາກເຫດການນີ້ ນາຮາດ ກະສັດຂອງຄົນ ອຳໂມນ ກໍສິ້ນພະຊົນ ແລະລູກ
ຊາຍຂອງພະອົງໄດ້ຂຶ້ນປົກຄອງແທນ 2ແລະ ດາວິດ ກ່າວວ່າ "ເຮົາຈະສະແດງຄວາມເມດຕາຕໍ່
ຮານູນ ລູກຊາຍຂອງ ນາຮາດ ເພາະວ່າພໍ່ຂອງເພິ່ນໄດ້ສະແດງຄວາມເມດຕາຕໍ່ເຮົາ" ດາວິດ ຈຶ່ງ
ໄດ້ສົ່ງຜູ້ສົ່ງຂ່າວໄປເລົ້າໂລມໃຈເພິ່ນກ່ຽວກັບພໍ່ຂອງເພິ່ນທີ່ຕາຍໄປ ແລະຂ້າລາຊະການຂອງ
ດາວິດ ກໍໄດ້ໄປຮອດ ຮານູນ ໃນແຜ່ນດິນຂອງລູກຫລານ ອຳໂມນ ເພື່ອຈະເລົ້າໂລມໃຈເພິ່ນ. 3ແຕ່
ບັນດາເຈົ້ານາຍຂອງລູກຫລານ ອຳໂມນ ທູນ ຮານູນ ວ່າ "ທ່ານຄິດວ່າກະສັດ ດາວິດ ສົ່ງຜູ້ເລົ້າ
ໂລມໃຈມາຫາທ່ານ ເພາະນັບຖືບິດາຂອງທ່ານຢ່າງນັ້ນບໍ? ຂ້າລາຊະການຂອງ ດາວິດ ມາຫາ
ທ່ານເພື່ອຄົ້ນຫາ, ທຳລາຍ ແລະສອດແນມແຜ່ນດິນນີ້ບໍ່ແມ່ນບໍ?" 4ຮານູນ ຈຶ່ງຈັບຂ້າລາຊະການ
ຂອງ ດາວິດ ແລະແຖຂົນຂອງພວກເຂົາ, ຕັດເຄື່ອງນຸ່ງພວກເຂົາຜ່າກາງຈົນຮອດກະໂພກ ແລະ
ປ່ອຍພວກເຂົາກັບໄປ 5ເມື່ອມີບາງຄົນໄປທູນ ດາວິດ ເຖິງເລື່ອງຄົນເຫລົ່ານັ້ນ ພະອົງກໍໄດ້ໃຊ້ໃຫ້
ໄປຮັບເອົາພວກເຂົາ ເພາະຄົນເຫລົ່ານັ້ນ ອັບອາຍຫລາຍ ແລະກະສັດກ່າວວ່າ "ຈົ່ງພັກຢູ່ທີ່
ເມືອງ ເຢຣີໂກ ຈົນກວ່າໜວດຂອງທ່ານທັງຫລາຍຈະປົ່ງຂຶ້ນໃໝ່ແລ້ວຈຶ່ງຄ່ອຍກັບຄືນມາ"
6ເມື່ອລູກຫລານ ອຳໂມນ ເຫັນວ່າພວກເຂົາໄດ້ເຮັດຜິດຕໍ່ ດາວິດ ຮານູນ ແລະລູກຫລານ ອຳ-
ໂມນ ຈຶ່ງສົ່ງເງິນໜຶ່ງ ພັນຕະລັນໄປຈ້າງລົດຮົບ ແລະທະຫານມ້າຈາກປະເທດ ເມໂຊໂປຕາເມຍ,
ຈາກ ອາຣາມ-ມາອາກາ ແລະ ຈາກ ໂຊບາ 7ພວກເຂົາໄດ້ຈ້າງລົດຮົບສາມໝື່ນສອງພັນຄັນ
ແລະກະສັດແຫ່ງ ເມືອງ ມາອາກາ ກັບກອງທັບຂອງຕົນ ພວກເຂົາໄດ້ຕັ້ງຄ້າຍພັກຢູ່ຕໍ່ໜ້າເມືອງ
ເມເດບາ ແລະລູກຫລານ ອຳໂມນ ກໍທ້ອນໂຮມກັນຈາກເມືອງຕ່າງໆຂອງພວກເຂົາເພື່ອສູ້ຮົບ
8ເມື່ອ ດາວິດ ໄດ້ຍິນ ເລື່ອງນັ້ນ ຈຶ່ງ ໃຊ້ ໂຢອາບ ແລະ ກອງທະຫານທີ່ ເກັ່ງກ້າ ທັງໝົດ ອອກໄປ
9ລູກຫລານ ອຳໂມນ ກໍອອກມາຕັ້ງຖານທັບຢູ່ຕໍ່ໜ້າປະຕູເມືອງ ແລະບັນດາກະສັດທີ່ຍົກຍ້າຍມາກໍ
ຢູ່ໃນທົ່ງນາຕ່າງຫາກ 10ເມື່ອ ໂຢອາບ ເຫັນວ່າການເສິກນັ້ນໄດ້ຕັ້ງຖານທັບຢູ່ທາງຂ້າງໜ້າ ແລະ
ຂ້າງຫລັງ ເພິ່ນຈຶ່ງເອົາຄົນທີ່ກ້າຫານຈາກ ຊາວອິສຣາເອນທີ່ໄດ້ຄັດເລືອກໄວ້ແລ້ວ ແລະຈັດ

[ກ]2 ຊາມູເອນ 10:1-19

ທັບເຂົ້າໄປຕໍ່ສູ້ຄົນຊີເຣຍ [11]ສ່ວນຄົນຂອງເພິ່ນທີ່ຍັງເຫລືອຢູ່ ເພິ່ນກໍມອບໄວ້ໃນການບັງຄັບບັນ-
ຊາຂອງ ອາບີຊາຍ ນ້ອງຊາຍຂອງຕົນ ຄົນເຫລົ່າ ນັ້ນກໍຈັດຕຽມເຂົ້າສູ້ຮົບກັບລູກຫລານ ອຳໂມນ
[12]ເພິ່ນໄດ້ກ່າວວ່າ "ຖ້າຄົນ ຊີເຣຍ ມີກຳລັງ ແຮງກວ່າກຳລັງຂອງ ເຮົາ ແລ້ວ ເຈົ້າຈົ່ງຊ່ວຍ ເຮົາ ແຕ່
ຖ້າກຳລັງຄົນ ອຳໂມນ ເໜືອກຳລັງຂອງ ເຈົ້າ ເຮົາຈະຊ່ວຍ ເຈົ້າ [13]ຈົ່ງມີຄວາມກ້າຫານ ເຖີດ ແລະ
ໃຫ້ ເຮົາ ເປັນລູກຜູ້ຊາຍ ເພື່ອຊົນຊາດຂອງ ເຮົາ ແລະ ເພື່ອຫົວ ເມືອງຂອງ ພຣະເຈົ້າ ຂອງ ເຮົາ
ແລະຂໍ ພຣະຜູ້ເປັນເຈົ້າ ໄດ້ກະທຳສິ່ງທີ່ພໍພຣະໄທໃນສາຍພຣະເນດຂອງພຣະອົງເຖີດ" [14]ດັ່ງນັ້ນ
ໂຢອາບ ແລະປະຊາຊົນຜູ້ທີ່ຢູ່ກັບ ເພິ່ນຈຶ່ງ ໄດ້ຫຍັບ ເຂົ້າໄປໃກ້ໆຂ້າງໜ້າຄົນ ຊີເຣຍ ເພື່ອສູ້ຮົບ
ແລະພວກເຂົາ ກໍແຕກໜີໄປຕໍ່ໜ້າເພິ່ນ [15]ເມື່ອລູກຫລານ ອຳໂມນ ເຫັນວ່າຄົນຊີເຣຍ ໄດ້ປົບໜີໄປ
ແລ້ວ ພວກເຂົາກໍປົບໜີໄປຕໍ່ໜ້າ ອາບີຊາຍ ນ້ອງຊາຍ ຂອງ ໂຢອາບ ດ້ວຍ ແລະເຂົ້າໄປໃນເມືອງ
ແລ້ວ ໂຢອາບ ກໍໄປເມືອງ ເຢຣູຊາເລັມ

[16]ແຕ່ ເມື່ອຄົນ ຊີເຣຍ ເຫັນວ່າພວກ ເຂົາພ່າຍ ແພ້ຕໍ່ຊາວ ອິສຣາເອນ; ພວກ ເຂົາຈຶ່ງສົ່ງຜູ້ຮັບໃຊ້
ໄປຫາຄົນ ຊີເຣຍ ຊຶ່ງຢູ່ຟາກ ແມ່ນ້ຳເບື້ອງນັ້ນ; ມີ ໂຊຟາກ ຜູ້ບັງຄັບບັນຊາກອງທັບຂອງ ຮາດັດ-
ເອເຊີ ເປັນຫົວໜ້ານຳພາພວກເຂົາ

## ດາວິດໄດ້ບັນຊາການສູ້ຮົບເອງ

[17]ແລະ ເມື່ອມີຄົນກາບທູນ ດາວິດ ພະອົງກໍໄດ້ທ້ອນໂຮມ ອິສຣາເອນ ທັງໝົດ ເຂົ້າກັນ ແລະ
ຂ້າມແມ່ນ້ຳຢໍແດນ ມາຫາພວກເຂົາ ແລະຈັດຕຽມທັບເພື່ອຕໍ່ສູ້ກັບພວກເຂົາ, ເມື່ອ ດາວິດ ໄດ້ຈັດ
ຕຽມທັບເຂົ້າຕໍ່ສູ້ກັບຄົນຊີເຣຍ, ພວກເຂົາກໍເລີ່ມຕໍ່ສູ້ກັບພະອົງ [18]ຄົນຊີເຣຍກໍໜີໄປຕໍ່ໜ້າຊາວ ອິ-
ສຣາເອນ ແລະ ດາວິດ ໄດ້ຂ້າຄົນ ຊີເຣຍ ຄື ຄົນຂັບລົດຮົບເຈັດພັນຄົນ, ທະຫານລາບສີ່ໝື່ນຄົນ
ແລະຂ້າ ໂຊຟາກ ຜູ້ບັນຊາການກອງທັບຂອງພວກເຂົາ [19]ເມື່ອຜູ້ຮັບໃຊ້ຂອງ ຮາດັດເອເຊີ ເຫັນວ່າ
ພວກເຂົາພ່າຍແພ້ຕໍ່ ອິສຣາເອນ ແລ້ວ ລາວຈຶ່ງຍອມເຮັດສັນຕິພາບກັບ ດາວິດ ແລະເປັນຜູ້ຮັບໃຊ້
ຂອງພະອົງ; ຄົນຊີເຣຍ ຈຶ່ງບໍ່ຊ່ວຍລູກຫລານ ອຳໂມນ ອີກຕໍ່ໄປ

# ບົດທີ 20

## ໂຢອາບກັບດາວິດຕີຊະນະເມືອງລັບບາ[ກ]

[1]ແລະຢູ່ມາພໍໝົດປີແລ້ວ ໃນເວລາທີ່ບັນດາກະສັດຍົກກອງທັບອອກໄປສູ້ຮົບ, ໂຢອາບ ກໍນຳ
ກຳລັງກອງທັບ ໄປກວາດລ້າງ ແຜ່ນດິນຂອງລູກຫລານ ອຳໂມນ ແລະໄດ້ປິດລ້ອມເມືອງລັບບາ
ໄວ້ ແຕ່ ດາວິດ ຄ້າງຢູ່ທີ່ ເຢຣູຊາເລັມ ແລະ ໂຢອາບ ກໍໄດ້ໂຈມຕີ ແລະທຳລາຍ ເມືອງລັບບາ;
[2]ດາວິດ ໄດ້ຖອດມົງກຸດອອກຈາກຫົວຂອງກະສັດຂອງພວກເຂົາ ພະອົງຮູ້ວ່າມົງກຸດນັ້ນມີທອງ-
ຄຳໜັກໜຶ່ງຕະລັນ ແລະມີເພັດພອຍຕ່າງໆ ແລະຕໍ່ມາພວກເຂົາໄດ້ເອົາມົງກຸດນັ້ນສວມເທິງຫົວ
ຂອງກະສັດ ດາວິດ ແລະພະອົງໄດ້ຍຶດເອົາສິ່ງຂອງຈາກເມືອງນັ້ນຢ່າງຫລວງຫລາຍ [3]ພະອົງໄດ້
ນຳປະຊາຊົນທີ່ຢູ່ໃນ ເມືອງນັ້ນອອກມາໃຫ້ພວກເຂົາເຮັດວຽກໜັກໂດຍຢູ່ກັບ ເລື່ອຍ, ເຫລັກຂູດ
ແລະຂວານ ກະສັດ ດາວິດ ໄດ້ເຮັດເຊັ່ນນີ້ກັບບັນດາເມືອງທັງໝົດຂອງລູກຫລານ ອຳໂມນ ແລ້ວ

[ກ]2 ຊາມູເອນ 12:26-31

ດາວິດກັບປະຊາຊົນທັງປວງກໍກັບຄືນ ເຢຣູຊາເລັມ

## ການຂ້າຄົນຮູບຮ່າງໃຫຍ່ຂອງຟີລິດສະຕິນ

4ຢູ່ມາພາຍຫລັງ ເກີດສົງຄາມຂຶ້ນກັບຄົນ ຟີລິດສະຕິນ ທີ່ເມືອງ ເກເຊ ແລ້ວ ສິບເບກາຍ ເຊື້ອ-
ສາຍ ຮູຊາຍ ໄດ້ຂ້າ ສິບປາຍ ຜູ້ເປັນລູກຫລານຂອງຄົນຮູບຮ່າງໃຫຍ່ ແລະຄົນ ຟີລິດສະຕິນ ກໍຖືກ
ປາບປາມ

5ແລະເກີດມີສົງຄາມກັບຄົນ ຟີລິດສະຕິນ ອີກ ແລ້ວ ເອນຮະນັນ ລູກຊາຍຢາອີ ໄດ້ຂ້າ ລາມີ ລູກ
ຊາຍຂອງ ໂກລີຢາດຊາວ ກັດ ຜູ້ມີຫອກທີ່ມີດ້າມໃຫຍ່ເທົ່າໄມ້ກຳພັ່ນຕຳແຜ່ນ

6ແລະມີສົງຄາມທີ່ເມືອງ ກັດ ອີກ ມີຊາຍຄົນໜຶ່ງຮູບຮ່າງໃຫຍ່ໂຕ ຜູ້ທີ່ມີມືເບື້ອງລະຫົກນິ້ວ
ແລະນິ້ວຕີນ ເບື້ອງລະຫົກນິ້ວລວມຊາວສີ່ນິ້ວ, ລາວ ເປັນລູກຊາຍຂອງຄົນຮູບຮ່າງ ໃຫຍ່ຄືກັນ
7ເມື່ອລາວໄດ້ທ້າທາຍ ອິສຣາເອນ; ໂຢນາທານ ລູກຊາຍຊີເມອີ ອ້າຍຂອງ ດາວິດ ກໍໄດ້ປະຫານ
ລາວ

8ຄົນ ເຫລົ່ານີ້ ເກີດຈາກຄົນຮູບຮ່າງໃຫຍ່ໃນ ເມືອງ ກັດ ແລະລາວໄດ້ລົ້ມຕາຍດ້ວຍມືຂອງກະ-
ສັດ ດາວິດ ແລະດ້ວຍມືຜູ້ຮັບໃຊ້ຂອງພະອົງ

# ບົດທີ 21

## ດາວິດນັບຈຳນວນທະຫານອິສຣາເອນ[ກ]

1ຊາຕານ ໄດ້ລຸກຂຶ້ນຕໍ່ສູ້ ອິສຣາເອນ ແລະດົນໃຈໃຫ້ ດາວິດ ນັບຈຳນວນ ອິສຣາເອນ 2ດາວິດ
ຈຶ່ງກ່າວກັບ ໂຢອາບ ແລະຜູ້ບັງຄັບບັນຊາກອງທັບວ່າ “ຈົ່ງໄປນັບຈຳນວນຄົນ ອິສຣາເອນ ຕັ້ງແຕ່
ເມືອງ ເບເອ-ເຊບາ ຮອດ ເມືອງ ດານ ແລ້ວນຳມາລາຍງານ ໃຫ້ ເຮົາ ເພື່ອຈະ ໄດ້ຮູ້ຈຳນວນລວມ
ຂອງພວກເຂົາ” 3ແຕ່ ໂຢອາບ ທູນວ່າ “ຂໍ ພຣະຜູ້ເປັນເຈົ້າ ໄດ້ເພີ່ມປະຊາຊົນຂອງພະອົງອີກຮ້ອຍ
ເທົ່າ ພ້ອມກັບສິ່ງຂອງທີ່ມີຢູ່ແລ້ວ; ຂ້າແດ່ກະສັດເຈົ້ານາຍຂອງຂ້າພະອົງ ປະຊາຊົນທັງໝົດນີ້
ເປັນຜູ້ຮັບໃຊ້ຂອງ ເຈົ້ານາຍຂອງຂ້າພະອົງບໍ່ແມ່ນບໍ? ເປັນຫຍັງ ເຈົ້ານາຍຂອງຂ້າພະອົງຈຶ່ງສັ່ງ
ການເຊັ່ນນີ້? ເຫດໃດພະອົງຈຶ່ງໄດ້ນຳການລະເມີດມາສູ່ ອິສຣາເອນ”

4ແຕ່ ໂຢອາບ ຂັດຄຳສັ່ງຂອງກະສັດບໍ່ໄດ້ ໂຢອາບ ຈຶ່ງຈາກໄປ ແລະໄປທົ່ວ ອິສຣາເອນ ທັງ
ໝົດ ແລະກັບມາເຖິງ ເຢຣູຊາເລັມ 5ໂຢອາບ ໄດ້ເອົາຈຳນວນບັນຊີປະຊາຊົນທີ່ນັບໄດ້ໃຫ້ແກ່ດາ-
ວິດ ໃນ ອິສຣາເອນ ທັງໝົດມີໜຶ່ງລ້ານໜຶ່ງແສນຄົນທີ່ຖືດາບ ແລະໃນ ຢູດາ ມີສີ່ແສນເຈັດໝື່ນຄົນ
ທີ່ຖືດາບ 6ແຕ່ວ່າເພິ່ນບໍ່ໄດ້ນັບພວກ ເລວີ ແລະ ເບັນຢາມິນ ໃນທ່າມກາງພວກເຂົາ ເພາະວ່າຄຳ
ສັ່ງຂອງກະສັດເປັນທີ່ໜ້າກຽດຊັງແກ່ ໂຢອາບ

## ດາວິດໄດ້ເລືອກພະຍາດລະບາດ[ຂ]

7ແຕ່ ພຣະເຈົ້າບໍ່ໄດ້ພໍພຣະໄທໃນເລື່ອງນີ້ ພຣະອົງຈຶ່ງໄດ້ລົງໂທດຊາວ ອິສຣາເອນ

8ແລະ ດາວິດ ກາບທູນ ພຣະເຈົ້າ ວ່າ “ຂ້າພະອົງໄດ້ເຮັດບາບອັນຍິ່ງໃຫຍ່ໃນການທີ່ຂ້າພະອົງ
ໄດ້ເຮັດໃນສິ່ງນີ້ ຂ້າພະອົງອ້ອນວອນຕໍ່ພຣະອົງບັດນີ້ຂໍໂຜດຍົກໂທດບາບ ແຫ່ງຄວາມຊົ່ວຮ້າຍ

[ກ]2 ຊາມູເອນ 24:1-19 [ຂ]2 ຊາມູເອນ 24:10-17

ຂອງຜູ້ຮັບໃຊ້ຂອງພຣະອົງ ເພາະຂ້າພະອົງໄດ້ເຮັດການອັນໂງ່ຈ້າຫລາຍ” 9ແລະ ພຣະຜູ້ເປັນ-
ເຈົ້າກ່າວກັບ ຄາດຜູ້ທຳນວາຍຂອງດາວິດວ່າ 10“ຈົ່ງໄປບອກດາວິດວ່າ ‘ພຣະຜູ້ເປັນເຈົ້າກ່າວ
ດັ່ງນີ້ວ່າ ເຮົາເອົາໂທດສາມປະການວາງໄວ້ຕໍ່ໜ້າເຈົ້າ ຈົ່ງເລືອກເອົາ ປະການໜຶ່ງເພື່ອເຮົາຈະ
ໄດ້ລົງໂທດເຈົ້າ’” 11ຄາດ ຈຶ່ງເຂົ້າເຝົ້າ ດາວິດ ແລະກາບທູນພະອົງວ່າ “ພຣະຜູ້ເປັນເຈົ້າກ່າວດັ່ງ-
ນີ້ວ່າ ຈົ່ງເລືອກເອົາຕາມທີ່ທ່ານພໍໃຈ 12ຄື ຄວາມອຶດຢາກລະຫວ່າງສາມປີ ຫລືສັດຕູຂອງເຈົ້າ
ໄລ່ຕິດຕາມເຈົ້າລະຫວ່າງສາມເດືອນຂະນະທີ່ດາບຂອງ ສັດຕູຈະຕາມເຈົ້າທັນ ຫລືດາບຂອງ
ພຣະຜູ້ເປັນເຈົ້າ ສາມມື້ຄືພະຍາດລະບາດເກີດຂຶ້ນເທິງແຜ່ນດິນ ແລະທູດສະຫວັນ ຂອງ ພຣະຜູ້-
ເປັນເຈົ້າ ມາທຳລາຍໃນດິນແດນຂອງ ອິສຣາເອນ ທັງໝົດ ບັດນີ້ຂໍໄດ້ພິຈາລະນາເບິ່ງວ່າຈະໃຫ້
ຂ້າພະອົງກາບທູນພຣະອົງຜູ້ໄດ້ໃຊ້ຂ້າພະອົງມາວ່າຢ່າງໃດ?” 13ແລ້ວ ດາວິດ ກ່າວກັບ ຄາດ ວ່າ
“ເຮົາມີຄວາມກະວົນກະວາຍໃຈຫລາຍ ຂໍໃຫ້ເຮົາຕົກຢູ່ໃນພຣະຫັດຂອງ ພຣະຜູ້ເປັນເຈົ້າ ເພາະ-
ວ່າຄວາມເມດຕາຂອງພຣະອົງກໍຍິ່ງໃຫຍ່ຫລາຍ ຂໍຢ່າໃຫ້ເຮົາຕົກເຂົ້າໄປໃນມືຂອງມະນຸດເລີຍ”
14ດັ່ງນັ້ນ ພຣະຜູ້ເປັນເຈົ້າ ໄດ້ໃຫ້ພະຍາດລະບາດເກີດຂຶ້ນໃນ ອິສຣາເອນ ແລະຄົນ ອິສຣາເອນ
ໄດ້ລົ້ມຕາຍເຈັດໝື່ນຄົນ

15ແລະ ພຣະເຈົ້າ ໄດ້ໃຊ້ທູດສະຫວັນອົງໜຶ່ງໄປທຳລາຍ ເມືອງ ເຢຣູຊາເລັມ ເມື່ອທູດສະຫວັນ
ກຳລັງຈະທຳລາຍ ພຣະຜູ້ເປັນເຈົ້າ ໄດ້ທອດພຣະເນດ ແລະຊົງກັບພຣະໄທຈາກເຫດຮ້າຍນັ້ນ
ພຣະອົງໄດ້ບອກກັບທູດສະຫວັນຜູ້ກຳລັງຈະທຳລາຍນັ້ນວ່າ “ພໍແລ້ວ ຫ້າມມືຂອງເຈົ້າດຽວນີ້”
ແລະທູດສະຫວັນຂອງ ພຣະຜູ້ເປັນເຈົ້າ ກໍກຳລັງຢືນຢູ່ທີ່ລານຟາດເຂົ້າຂອງ ອາໂຣນາ ຄົນ ເຢ-
ບຸດ 16ດາວິດ ແຫງນໜ້າຂຶ້ນກໍໄດ້ເຫັນທູດສະຫວັນຂອງ ພຣະຜູ້ເປັນເຈົ້າ ຢືນຢູ່ລະຫວ່າງ ແຜ່ນດິນ
ໂລກ ແລະຟ້າສະຫວັນ ໃນມືຖືດາບຢຽດອອກເທິງເມືອງ ເຢຣູຊາເລັມ ແລ້ວດາວິດ ແລະພວກ
ເຖົ້າແກ່ຂອງ ອິສຣາເອນ ຜູ້ໄດ້ສວມຜ້າກະສອບໄດ້ກົ້ມໜ້າລົງ 17ດາວິດ ທູນ ພຣະເຈົ້າ ວ່າ “ຂ້າ-
ພະອົງບໍ່ແມ່ນບໍທີ່ອອກຄຳສັ່ງໃຫ້ນັບຈຳນວນປະຊາຊົນ; ຂ້າພະອົງເປັນຜູ້ເຮັດບາບ ແລະໄດ້ເຮັດ
ການຮ້າຍທີ່ໃຫຍ່ຫລວງນີ້ ແຕ່ບັນດາຝູງແກະເຫລົ່ານີ້ ພວກເຂົາໄດ້ເຮັດສິ່ງໃດ? ຂ້າແດ່ພຣະຜູ້-
ເປັນເຈົ້າ ພຣະເຈົ້າຂອງຂ້າພະອົງ ຂໍໃຫ້ພຣະຫັດຂອງພຣະອົງຢູ່ເໜືອຂ້າພະອົງ ແລະ ຄອບ-
ຄົວຂອງຂ້າພະອົງ ແຕ່ຂໍຢ່າໃຫ້ພະຍາດຮ້າຍ ນັ້ນຢູ່ເໜືອປະຊາຊົນຂອງພຣະອົງ”

## ພຣະເຈົ້າໄດ້ເລືອກລານຟາດເຂົ້າຂອງອາໂຣນາໃຫ້ເປັນບ່ອນສ້າງແທ່ນບູຊາ[ກ]

18ແລ້ວທູດສະຫວັນຂອງ ພຣະຜູ້ເປັນເຈົ້າ ໄດ້ສັ່ງໃຫ້ ຄາດ ທູນ ດາວິດ ວ່າ ໃຫ້ ດາວິດ ຂຶ້ນໄປ
ສ້າງແທ່ນບູຊາຖວາຍແດ່ພຣະຜູ້ເປັນເຈົ້າທີ່ລານຟາດເຂົ້າຂອງ ອາໂຣນາຄົນ ເຢບຸດ 19ແລະ ດາ-
ວິດ ຂຶ້ນໄປຕາມຄຳຂອງ ຄາດ ຊຶ່ງເພິ່ນໄດ້ບອກໃນພຣະນາມຂອງ ພຣະຜູ້ເປັນເຈົ້າ 20ຝ່າຍ ອາ-
ໂຣນາກຳລັງຟາດເຂົ້າວີດຢູ່ ເພິ່ນຫັນມາເຫັນທູດສະຫວັນ ເພິ່ນພ້ອມກັບລູກຊາຍສີ່ຄົນທີ່ຢູ່ນຳກັນ
ກໍໄປລີ້ 21ເມື່ອ ດາວິດ ສະເດັດມາເຖິງ ອາໂຣນາ; ອາໂຣນາ ຫລຽວເຫັນ ດາວິດ ແລະອອກມາ
ຈາກລານຟາດເຂົ້າຄຳນັບ ດາວິດ ດ້ວຍການໝູບໜ້າລົງດິນຕໍ່ໜ້າດາວິດ 22ແລະ ດາວິດກ່າວກັບ
ອາໂຣນາວ່າ “ຈົ່ງຂາຍລານຟາດເຂົ້ານີ້ໃຫ້ແກ່ເຮົາເຖີດ ເພື່ອເຮົາຈະສ້າງແທ່ນບູຊາສຳລັບ ພຣະ-

[ກ]2 ຊາມູເອນ 24:18-25

ຜູ້ເປັນເຈົ້າໃນບ່ອນນີ້ ຈົ່ງຄິດຕາມລາຄາເຕັມ ເພື່ອວ່າພະຍາດລະບາດນັ້ນຈະໄດ້ຫາຍໄປຈາກ
ປະຊາຊົນ” [23]ແລ້ວອາໂຣນາກາບທູນດາວິດວ່າ “ເຊີນເອົາບ່ອນນີ້ສຳລັບພະອົງເຖີດ ແລະຂໍໃຫ້
ເຈົ້ານາຍຂອງຂ້າພະອົງ ເຮັດໃນສິ່ງທີ່ພະອົງໄດ້ເຫັນດີສາ, ຂ້າພະອົງຂໍຖວາຍງົວເພື່ອເປັນເຄື່ອງ
ເຜົາບູຊາ ແລະຖວາຍໄມ້ຟາດເຂົ້າໃຫ້ເປັນຟືນ ແລ້ວເຂົ້າສາລີເປັນເຄື່ອງບູຊາພືດຜົນເປັນເມັດ
ສິ່ງເຫລົ່ານີ້ຂ້ານ້ອຍຂໍຖວາຍທັງໝົດ” [24]ແຕ່ກະສັດດາວິດກ່າວກັບອາໂຣນາວ່າ “ບໍ່ໄດ້ດອກ
ແຕ່ເຮົາຈະຊື້ເອົາຕາມລາຄາເຕັມ ເຮົາຈະບໍ່ເອົາສິ່ງຂອງເຈົ້າ ຖວາຍພຣະຜູ້ເປັນເຈົ້າເປັນເຄື່ອງ
ເຜົາບູຊາໂດຍທີ່ເຮົາບໍ່ໄດ້ເສຍຄ່າ” [25]ດາວິດຈຶ່ງໄດ້ຈ່າຍໃຫ້ອາໂຣນາເປັນທອງຄຳໜັກຫົກຮ້ອຍ
ເຊເຂສຳລັບບ່ອນນັ້ນ [26]ດາວິດໄດ້ກໍ່ສ້າງແທ່ນບູຊາຖວາຍສຳລັບພຣະຜູ້ເປັນເຈົ້າຢູ່ບ່ອນນັ້ນ
ແລະຖວາຍເຄື່ອງເຜົາບູຊາ ກັບເຄື່ອງບູຊາໂມທະນາພຣະຄຸນ ແລະ ກາບທູນອອກພຣະນາມ
ພຣະຜູ້ເປັນເຈົ້າ ແລະພຣະອົງໄດ້ຕອບດາວິດດ້ວຍໄຟຈາກສະຫວັນຕົກເທິງແທ່ນເຜົາບູຊາ
[27]ແລ້ວພຣະຜູ້ເປັນເຈົ້າກໍໄດ້ສັ່ງແກ່ທູດສະຫວັນ ແລະທູດນັ້ນກໍໄດ້ເອົາດາບເຂົ້າໃສ່ໄວ້ໃນຝັກ
ຄືນ

[28]ເທື່ອນັ້ນ ເມື່ອດາວິດໄດ້ເຫັນວ່າພຣະຜູ້ເປັນເຈົ້າໄດ້ຕອບຕົນໃນລານຟາດເຂົ້າຂອງອາໂຣ-
ນາຄົນເຢບຸດພະອົງກໍໄດ້ຖວາຍບູຊາໃນບ່ອນນັ້ນ [29]ເພາະຫໍເຕັນຂອງພຣະຜູ້ເປັນເຈົ້າທີ່ໂມເຊ
ໄດ້ສ້າງຂຶ້ນໃນຖິ່ນແຫ້ງແລ້ງກັນດານ ແລະແທ່ນເຜົາບູຊາກໍຢູ່ໃນບ່ອນສູງທີ່ ກິເບໂອນໃນສະ-
ໄໝນັ້ນ. [30]ແຕ່ດາວິດບໍ່ກ້າທີ່ຈະໄປທູນຖາມພຣະເຈົ້າຢູ່ຕໍ່ໜ້າແທ່ນບູຊານັ້ນ ເພາະພະອົງຢ້ານ
ດາບຂອງທູດສະຫວັນຂອງພຣະຜູ້ເປັນເຈົ້າ

# ບົດທີ 22

## ດາວິດໄດ້ຕຽມວັດຖຸສຳລັບການສ້າງພຣະວິຫານ

[1]ແລ້ວດາວິດໄດ້ກ່າວວ່າ “ນີ້ແຫລະ ພຣະວິຫານຂອງພຣະຜູ້ເປັນເຈົ້າ ພຣະເຈົ້າ ກໍຢູ່ບ່ອນ
ນີ້ ແລະແທ່ນສຳລັບເຜົາເຄື່ອງບູຊາຂອງຊາວອິສຣາເອນກໍແມ່ນແທ່ນນີ້”

[2]ດາວິດໄດ້ອອກຄຳສັ່ງໃຫ້ຮວບຮວມຄົນຕ່າງດ້າວທີ່ຢູ່ໃນແຜ່ນດິນອິສຣາເອນ ແລະໄດ້ຈັດ
ພວກສະກັດຫີນໃຫ້ຕຽມສະກັດຫີນເພື່ອສ້າງພຣະວິຫານຂອງພຣະເຈົ້າ [3]ດາວິດໄດ້ຈັດຕຽມ
ເຫລັກເປັນຈຳນວນຫລາຍ ເພື່ອເປັນເຫລັກຕະປູສຳລັບບານປະຕູຮົ້ວ ແລະເຫລັກຈອດພ້ອມທັງ
ທອງເຫຼືອງເປັນຈຳນວນຫລວງຫລາຍຈົນບໍ່ສາມາດທີ່ຈະຊັ່ງນ້ຳໜັກໄດ້ [4]ແລະໄມ້ສົນສີດາ ນັບບໍ່
ຖ້ວນ ເພາະວ່າຊາວຊີໂດນ ແລະຊາວຕີເຣ ໄດ້ນຳໄມ້ສົນສີດາເປັນຈຳນວນຫລວງຫລາຍມາ
ຖວາຍແກ່ດາວິດ

[5]ເພາະດາວິດໄດ້ກ່າວວ່າ “ໂຊໂລໂມນລູກຊາຍຂອງເຮົາກໍຍັງນ້ອຍຢູ່ ແລະບໍ່ເຄີຍຜ່ານວຽກ
ງານ ແລະພຣະວິຫານຊຶ່ງຈະສ້າງຖວາຍພຣະຜູ້ເປັນເຈົ້ານັ້ນຕ້ອງສວຍງາມກວ້າງໃຫຍ່ ມີຊື່ສຽງ
ແລະມີສະຫງ່າລາສີໃນທ່າມກາງບັນດາປະເທດທັງຫລາຍ ເພາະສະນັ້ນ ເຮົາຈຶ່ງຈະຈັດຕຽມໄວ້”
ດາວິດຈຶ່ງໄດ້ຈັດຕຽມວັດຖຸເປັນຈຳນວນຫລວງຫລາຍກ່ອນພະອົງຈະສິ້ນພະຊົນ

## ດາວິດໄດ້ສັ່ງໂຊໂລໂມນ

[6]ແລ້ວພະອົງໄດ້ເອີ້ນໂຊໂລໂມນລູກຊາຍຂອງຕົນມາແລະສັ່ງລາວໃຫ້ສ້າງພຣະວິຫານສຳລັບ
ພຣະຜູ້ເປັນເຈົ້າ ພຣະເຈົ້າຂອງອິສຣາເອນ [7]ດາວິດໄດ້ບອກແກ່ໂຊໂລໂມນວ່າ "ລູກຊາຍເອີຍ
ເຮົາມີໃຈປະສົງທີ່ຈະສ້າງພຣະວິຫານສຳລັບພຣະນາມແຫ່ງພຣະຜູ້ເປັນເຈົ້າພຣະເຈົ້າຂອງເຮົາ
[8]ແຕ່ພຣະທຳຂອງພຣະຜູ້ເປັນເຈົ້າໄດ້ມາເຖິງເຮົາວ່າ 'ເຈົ້າໄດ້ເຮັດໃຫ້ຄົນເລືອດຕົກຫລາຍ ແລະ
ໄດ້ເຮັດສົງຄາມຢ່າງຫລວງຫລາຍ ເຈົ້າຢ່າໄດ້ສ້າງພຣະວິຫານເພື່ອນາມຂອງເຮົາເລີຍ ເພາະ
ເຈົ້າໄດ້ເຮັດໃຫ້ເລືອດຕົກລົງດິນຢ່າງມາກລົ້ນຕໍ່ຕາຂອງເຮົາເທິງແຜ່ນດິນໂລກ [9]ເບິ່ງແມ ລູກ
ຊາຍຄົນໜຶ່ງຂອງເຈົ້າຈະບັງເກີດມາ ລາວຈະມີຄວາມສະຫງົບສຸກ, ເຮົາຈະປະທານໃຫ້ລາວຢູ່
ເຢັນເປັນສຸກພົ້ນຈາກສັດຕູທັງໝົດທີ່ຢູ່ອ້ອມຂ້າງລາວ ເພາະວ່າລາວຈະມີຊື່ວ່າໂຊໂລໂມນ ໃນ
ສະໄໝຂອງລາວເຮົາຈະໂຜດ ໃຫ້ອິສຣາເອນມີສັນຕິພາບ ແລະຄວາມສະຫງົບສຸກ [10]ລາວຈະ
ສ້າງພຣະວິຫານເພື່ອນາມຂອງເຮົາ, ລາວຈະເປັນບຸດຂອງເຮົາ ແລະເຮົາຈະເປັນບິດາຂອງລາວ
ແລະເຮົາຈະສະຖາປະນາລາຊະບັນລັງຂອງລາວປົກຄອງອິສຣາເອນຕະຫລອດໄປເປັນນິດ'
[11]ນີ້ແຫລະ ລູກຊາຍເອີຍ ຂໍພຣະຜູ້ເປັນເຈົ້າໄດ້ສະຖິດຢູ່ກັບເຈົ້າ ແລະຂໍໃຫ້ເຈົ້າມີຄວາມຈະ-
ເລີນຮຸ່ງເຮືອງຂຶ້ນ ແລະກໍ່ສ້າງພຣະວິຫານຂອງພຣະຜູ້ເປັນເຈົ້າ ພຣະເຈົ້າຂອງເຈົ້າສຳເລັດຕາມ
ທີ່ພຣະອົງໄດ້ກ່າວເຖິງເຈົ້າເຖີດ [12]ຂໍພຽງແຕ່ພຣະຜູ້ເປັນເຈົ້າປະທານສະຕິປັນຍາ ແລະຄວາມ
ເຂົ້າໃຈໃຫ້ແກ່ເຈົ້າ ແລະຕັ້ງເຈົ້າໃຫ້ປົກຄອງອິສຣາເອນ ແລະໂຜດໃຫ້ເຈົ້າຖືຮັກສາພຣະບັນຍັດ
ຂອງພຣະຜູ້ເປັນເຈົ້າ ພຣະເຈົ້າຂອງເຈົ້າ [13]ເມື່ອນັ້ນ ເຈົ້າຈະຈະເລີນຮຸ່ງເຮືອງຂຶ້ນ ຖ້າເຈົ້າລະ-
ມັດລະວັງທີ່ຈະປະຕິບັດຕາມພຣະບັນຍັດ ແລະຂໍ້ຄຳສັ່ງທັງຫລາຍ ຊຶ່ງພຣະຜູ້ເປັນເຈົ້າໄດ້ສັ່ງໄວ້
ກັບໂມເຊສຳລັບຊົນຊາດອິສຣາເອນ; ຈົ່ງເຂັ້ມແຂງ ແລະກ້າຫານເຖີດ ຢ່າຢ້ານ ແລະຢ່າຕົກ-
ໃຈເລີຍ [14]ແລະເບິ່ງແມ ໃນຄວາມຍາກລຳບາກຂອງຂ້ອຍ, ຂ້ອຍໄດ້ຈັດຕຽມໄວ້ສຳລັບພຣະວິ-
ຫານຂອງພຣະຜູ້ເປັນເຈົ້າ ເປັນທອງຄຳໜັກໜຶ່ງແສນຕະລັນຕົນ, ເງິນໜັກໜຶ່ງລ້ານຕະລັນ,
ທອງເຫຼືອງ ແລະເຫລັກທີ່ບໍ່ສາມາດຈະຊັ່ງໄດ້ ເພາະມີຈຳນວນຢ່າງຫລວງຫລາຍ ເຮົາໄດ້ຈັດ
ຕຽມໄມ້ແລະຫີນທັງຫລາຍ ເຈົ້າຈະເພີ່ມຕື່ມເຂົ້າອີກກໍໄດ້ [15]ຫລາຍໄປກວ່ານັ້ນ ຍັງມີຄົນເຮັດ
ວຽກຢ່າງຫລວງຫລາຍທີ່ຢູ່ນຳເຈົ້າ ຄືຊ່າງສະກັດຫີນ ຊ່າງກໍ່ ຊ່າງໄມ້ ແລະຊ່າງສີມືທຸກໆປະ-
ເພດ [16]ສ່ວນທອງຄຳ, ເງິນ, ທອງເຫຼືອງ ແລະເຫລັກນັ້ນມີຈຳນວນຫລວງຫລາຍຈົນນັບບໍ່ໄດ້;
ຈົ່ງລຸກຂຶ້ນ ແລະເຮັດການນັ້ນເຖີດ ແລະຂໍພຣະຜູ້ເປັນເຈົ້າສະຖິດຢູ່ກັບເຈົ້າ"

## ດາວິດໄດ້ອອກຄຳສັ່ງໃຫ້ບັນດາຫົວໜ້າທັງຫລາຍຂອງອິສຣາເອນຊ່ວຍໂຊໂລໂມນ

[17]ດາວິດໄດ້ອອກຄຳສັ່ງໃຫ້ຫົວໜ້າເຜົ່າທັງປວງຂອງອິສຣາເອນໃຫ້ຊ່ວຍໂຊໂລໂມນລູກຊາຍ
ຂອງພະອົງວ່າ [18]"ພຣະຜູ້ເປັນເຈົ້າພຣະເຈົ້າຂອງເຈົ້າໄດ້ສະຖິດຢູ່ກັບເຈົ້າບໍ່ແມ່ນບໍ? ແລະພຣະ-
ອົງໄດ້ປະທານໃຫ້ພວກເຈົ້າມີຄວາມສະຫງົບສຸກໃນທຸກດ້ານບໍ່ແມ່ນບໍ? ເພາະພຣະອົງໄດ້ມອບ
ຊາວແຜ່ນດິນນີ້ໄວ້ໃນມືຂອງເຮົາ ແລະແຜ່ນດິນນັ້ນກໍສະຫງົບຕໍ່ພຣະພັກພຣະຜູ້ເປັນເຈົ້າ ແລະ
ຕໍ່ໜ້າປະຊາຊົນຂອງພຣະອົງ [19]ບັດນີ້ຈົ່ງຕັ້ງຈິດຕັ້ງໃຈຂອງເຈົ້າທີ່ຈະຊອກຫາພຣະຜູ້ເປັນເຈົ້າ

ພຣະເຈົ້າຂອງເຈົ້າ ແລະຈົ່ງລຸກຂຶ້ນສ້າງສະຖານທີ່ບໍລິສຸດຂອງພຣະຜູ້ເປັນເຈົ້າ ເພື່ອຈະເອົາຫີບ
ຄຳໝັ້ນສັນຍາຂອງພຣະຜູ້ເປັນເຈົ້າ ແລະເຄື່ອງໃຊ້ອັນບໍລິສຸດຂອງພຣະອົງກໍດີ ມາໄວ້ໃນພຣະ-
ວິຫານທີ່ຈະສ້າງຂຶ້ນສຳລັບພຣະນາມຂອງພຣະຜູ້ເປັນເຈົ້າ"

# ບົດທີ 23

## ດາວິດໄດ້ຕັ້ງໂຊໂລໂມນໃຫ້ເປັນກະສັດ

1ເມື່ອດາວິດເຖົ້າຫລາຍແລ້ວ ພະອົງໄດ້ຕັ້ງໂຊໂລໂມນລູກຊາຍຂອງພະອົງໃຫ້ເປັນກະສັດ
ປົກຄອງອິສຣາເອນ

2ແລະພະອົງໄດ້ເອີ້ນເຈົ້ານາຍທັງໝົດຂອງອິສຣາເອນ, ບັນດາປະໂລຫິດ ແລະຄົນເລວີມາ
ປະຊຸມກັນ 3ພວກເຂົາໄດ້ນັບຈຳນວນຄົນເລວີນັບຕັ້ງແຕ່ອາຍຸສາມສິບປີຂຶ້ນໄປ ຊຶ່ງມີຈຳນວນ
ສາມໝື່ນແປດພັນຄົນ 4ຈາກພວກນີ້ສອງໝື່ນສີ່ພັນຄົນຈະຕ້ອງເບິ່ງແຍງວຽກງານໃນພຣະວິຫານ
ຂອງພຣະຜູ້ເປັນເຈົ້າ ແລະຫົກພັນຄົນເປັນເຈົ້າໜ້າທີ່ ແລະຜູ້ຕັດສິນ 5ແລະສີ່ພັນຄົນເປັນຜູ້ເຝົ້າ
ຍາມບັນດາປະຕູ ແລະອີກສີ່ພັນຄົນຈະຖວາຍສັນລະເສີນແດ່ພຣະຜູ້ເປັນເຈົ້າດ້ວຍເຄື່ອງ ດົນຕີ
ຕ່າງໆທີ່ເຮົາໄດ້ສ້າງໄວ້ສຳລັບການສັນລະເສີນ" 6ແລະດາວິດໄດ້ຈັດແບ່ງພວກເຂົາເປັນຜະ-
ແໜກຕາມລູກຊາຍຂອງເລວີ ຄື ເກໂຊນ, ໂກຣາດ ແລະເມຣາຣີ

## ເຊື້ອສາຍຂອງເກໂຊນ[ກ]

7ໃນຈຳພວກເກໂຊນ ຄື ລາດານ ແລະຊີເມອີ

8ລູກຊາຍຂອງລາດານຊື່ວ່າ ເຢຮີເອນເປັນຫົວໜ້າ, ເຊທາມ ແລະໂຢເອນ ມີທັງໝົດສາມ
ຄົນ

9ລູກຊາຍຂອງຊີເມອີຊື່ວ່າເຊໂລມິດ, ຮາຊີເອນ ແລະຮາຣານ ທັງໝົດສາມຄົນ ຄົນເຫລົ່ານີ້
ເປັນຫົວໜ້າຂອງບັນພະບູລຸດຂອງລາດານ

10ແລະລູກຊາຍຂອງຊີເມອີຄື ຢາຮາດ, ຊີນາ, ເຢອຸດ ແລະເບຣີອາ ທັງສີ່ຄົນນີ້ເປັນລູກ
ຊາຍຂອງຊີເມອີ 11ແລະຢາຮາດເປັນຫົວໜ້າ, ຊີຊາເປັນຜູ້ທີສອງ ແຕ່ ເຢອຸດ ແລະເບຣີອາບໍ່
ມີລູກຊາຍຫລາຍຄົນ ເພາະສະນັ້ນ ໃນການນັບຈຳນວນຈຶ່ງລວມເຂົ້າເປັນຄອບຄົວບັນພະບູລຸດ
ດຽວກັນ

## ເຊື້ອສາຍຂອງໂກຣາດ[ຂ]

12ລູກຊາຍຂອງໂກຣາດຄື ອຳຣາມ, ອິດຊະຮາ, ເຮັບໂຣນ ແລະອຸດຊີເອນລວມສີ່ຄົນ

13ລູກຊາຍຂອງອຳຣາມຄື ອາໂຣນ ແລະໂມເຊ ພວກເຂົາຕັ້ງອາໂຣນໄວ້ຕ່າງຫາກໃຫ້ເປັນຜູ້
ເຮັດພິທີຊຳລະສິ່ງ ຂອງທີ່ບໍລິສຸດທີ່ສຸດທັງລາວ ແລະລູກຊາຍຂອງລາວສືບໆໄປເປັນນິດ ເພື່ອ
ເຜົາເຄື່ອງຫອມຖວາຍຕໍ່ພຣະພັກພຣະຜູ້ເປັນເຈົ້າ ແລະບົວລະບັດພຣະອົງ ແລະອວຍພຣະພອນ
ໃນພຣະນາມຂອງພຣະອົງຕະຫລອດໄປເປັນນິດ 14ຝ່າຍໂມເຊຄົນຂອງພຣະເຈົ້ານັ້ນ ລູກຊາຍ
ຂອງເພິ່ນມີຊື່ໃນທ່າມກາງຕະກູນເລວີ

---

[ກ]ຈົດເຊັນບັນຊີ 3:25-26 [ຂ]ຈົດເຊັນບັນຊີ 3:27-31

15ລູກຊາຍຂອງໂມເຊຊື່ວ່າ ເກໂຊມ ແລະເອລີເອເຊ
16ລູກຊາຍຂອງເກໂຊມຊື່ວ່າ ເຊບູເອນຜູ້ເປັນຫົວໜ້າ
17ລູກຊາຍຂອງເອລີເອເຊຄື ເຣຮາບີຢາຜູ້ເປັນຫົວໜ້າ, ເອລີເອເຊບໍ່ມີລູກຊາຍອີກ ແຕ່ລູກ
ຊາຍຂອງເຣຮາບີຢາມີ ຫລາຍຄົນ
18ລູກຊາຍຂອງອິດຊະຮາຄື ເຊໂລມິດຜູ້ເປັນຫົວໜ້າ
19ລູກຊາຍຂອງເຮັບໂຣນຄື ເຢຣີຢາເປັນຜູ້ກົກ, ອາມາຣີຢາຜູ້ທີສອງ ຢາຮາຊີເອນຜູ້ທີສາມ
ແລະເຢກາເມອາມຜູ້ທີສີ່
20ລູກຊາຍຂອງອຸດຊີເອນຄື ມີກາເປັນຜູ້ກົກ ແລະອິດຊີຢາຜູ້ທີສອງ

## ເຊື້ອສາຍຂອງເມຣາຣີ[ກ]

21ລູກຊາຍຂອງເມຣາຣີຄື ມາລີ ແລະມູຊີ ລູກຊາຍຂອງມາລີຄື ເອເລອາຊາ ແລະກີເຊ
22ເອເລອາຊາສິ້ນຊີວິດໂດຍທີ່ບໍ່ມີລູກຊາຍ ມີແຕ່ລູກສາວ ລູກຊາຍຂອງກີເຊຜູ້ເປັນພີ່ນ້ອງ
ຂອງລາວໄດ້ແຕ່ງງານກັບພວກຜູ້ຍິງເຫລົ່ານັ້ນ
23ລູກຊາຍຂອງມູຊີຄື ມາລີ, ເອເດ ແລະເຢເຣໂມດ ລວມສາມຄົນ

## ການຈັດວຽກງານໃໝ່ຂອງຄົນເລວີ

24ຄົນເຫລົ່ານີ້ເປັນຄົນເລວີຕາມເຊື້ອສາຍບັນພະບູລຸດຂອງພວກເຂົາ ເປັນຫົວໜ້າຕາມບັນ-
ພະບູລຸດຂອງພວກເຂົາ ຕາມທີ່ພວກເຂົາໄດ້ຂຶ້ນທະບຽນໄວ້ ຕາມຈຳນວນລາຍຊື່ຂອງບຸກຄົນ
ຕັ້ງແຕ່ອາຍຸຊາວປີຂຶ້ນໄປ ຜູ້ທີ່ຈະເຮັດວຽກບົວລະບັດໃນພຣະວິຫານຂອງພຣະຜູ້ເປັນເຈົ້າ
25ເພາະດາວິດໄດ້ກ່າວວ່າ "ພຣະຜູ້ເປັນເຈົ້າ ພຣະເຈົ້າຂອງອິສຣາເອນໄດ້ໂຜດໃຫ້ປະຊາຊົນ
ຂອງພຣະອົງຢູ່ຢ່າງສະຫງົບສຸກ ເພື່ອພວກເຂົາຈະໄດ້ອາໄສຢູ່ໃນເຢຣູຊາເລັມສືບໆໄປເປັນນິດ
26ແລະຄົນເລວີຈຶ່ງບໍ່ຕ້ອງຫາບຫາມຫໍເຕັນ ຫລືເຄື່ອງໃຊ້ໃດໆເພື່ອວຽກງານບົວລະບັດອີກເລີຍ"
27ເພາະວ່າພວກເຂົາໄດ້ນັບຈຳພວກລູກຫລານເລວີຕັ້ງແຕ່ອາຍຸຊາວປີຂຶ້ນໄປຕາມຄຳສັ່ງສຸດທ້າຍ
ຂອງດາວິດ
28ແຕ່ຫນ້າທີ່ຂອງພວກເຂົາຈະຕ້ອງຄອຍຖ້າຊ່ວຍລູກຊາຍຂອງອາໂຣນໃນການບົວລະບັດ
ພຣະວິຫານຂອງພະຜູ້ເປັນເຈົ້າ ມີການເຝົ້າໜ້າເດີ່ນ ແລະຫ້ອງທັງຫລາຍແລະວຽກງານຊຳລະ
ສິ່ງຂອງບ່ອນບໍລິສຸດທັງຫລາຍ ແລະທຸກວຽກ ຊຶ່ງເປັນວຽກງານໃນການບົວລະບັດພຣະວິຫານ
ຂອງພຣະເຈົ້າ 29ແລະຊ່ວຍເອົາເຂົ້າຈີ່ໄປວາງໄວ້ຕໍ່ພຣະພັກ ແປ້ງເນື້ອລະອຽດສຳລັບຖວາຍບູ-
ຊາ ເຂົ້າຈີ່ທີ່ບໍ່ມີເຊື້ອແປ້ງ ແຜ່ນເຂົ້າຈີ່ປີ້ງທີ່ທາດ້ວຍນ້ຳມັນ, ເຄື່ອງຜອງ ແລະເຄື່ອງວັດແທກທຸກ
ຂະໜາດ 30ທຸກໆຕອນເຊົ້າພວກເຂົາຈະຕ້ອງຢືນໂມທະນາພຣະຄຸນແລະສັນລະເສີນພຣະຜູ້-
ເປັນເຈົ້າ ແລະເວລາແລງກໍເຮັດເຊັ່ນດຽວກັນ 31ພ້ອມທັງການຖວາຍບັນດາເຄື່ອງເຜົາບູຊາແດ່
ພຣະຜູ້ເປັນເຈົ້າໃນວັນສະບາໂຕ, ໃນເດືອນອອກໃໝ່ມື້ຂຶ້ນໜຶ່ງຄ່ຳໃນວັນເທດສະການຕາມຈຳ-
ນວນທີ່ກຳນົດໃຫ້ຖວາຍບູຊາຕໍ່ພຣະພັກພຣະຜູ້ເປັນເຈົ້າທຸກມື້ເລື້ອຍໄປ 32ດັ່ງນັ້ນ ພວກເຂົາໄດ້
ຮັບໃຊ້ເບິ່ງແຍງຫໍເຕັນແຫ່ງຊຸມນຸມແລະຮັບໃຊ້ໃນບ່ອນບໍລິສຸດ ທັງການຮັບໃຊ້ຮ່ວມກັບລູກຊາຍ

[ກ]ຈົດເຊັນບັນຊີ 3:33-37

ຂອງ ອາໂຣນ ພີ່ນ້ອງຂອງພວກເຂົາ ເພື່ອງານບົວລະບັດໃນພຣະວິຫານຂອງ ພຣະຜູ້ເປັນເຈົ້າ

# ບົດທີ 24

## ໜ່ວຍງານຂອງລູກຫລານອາໂຣນ

1ຫນ່ວຍງານຂອງລູກຫລານ ອາໂຣນ ມີດັ່ງນີ້ ລູກຊາຍຂອງ ອາໂຣນ ມີຄື ນາດາບ, ອາບີຮູ,
ເອເລອາຊາ ແລະ ອີທາມາ
2ແຕ່ ນາດາບ ແລະ ອາບີຮູ ໄດ້ ເສຍຊີວິດກ່ອນພໍ່ຂອງຕົນ ແລະຍັງບໍ່ທັນມີລູກ, ເອເລອາຊາ
ແລະ ອີທາມາ ຈຶ່ງເຮັດໜ້າທີ່ຕຳແໜ່ງປະໂລຫິດ
3ດາວິດ ໄດ້ ແຕ່ງຕັ້ງພວກ ເຂົາ ເປັນ ແຕ່ລະໜ່ວຍງານຕາມໜ້າທີ່ ໃນການບົວລະບັດຂອງພວກ
ເຂົາ ມີຊາໂດກລູກຊາຍ ເອເລອາຊາ ແລະ ອາຮີເມເລັກ ລູກຊາຍ ອີທາມາ, 4ເຫັນວ່າຫົວໜ້າໃນ
ພວກລູກຊາຍຂອງ ເອເລອາຊາ ຫລາຍກວ່າໝູ່ໃນພວກລູກຊາຍຂອງ ອີທາມາ ພວກເຂົາໄດ້ຈັດ
ແບ່ງກັນເປັນໜ່ວຍງານດັ່ງນີ້: ພວກລູກຊາຍຂອງ ເອເລອາຊາ ມີສິບຫົກຄົນເປັນຫົວໜ້າ ອີງຕາມ
ຄອບຄົວ ບັນພະບູລຸດຂອງພວກເຂົາ ແລະໃນພວກລູກຊາຍຂອງ ອີທາມາ ມີແປດຄົນອີງຕາມ
ຄອບຄົວ ບັນພະບູລຸດ ຂອງ ພວກ ເຂົາ 5ພວກ ເຂົາ ຈັດ ແບ່ງ ໜ່ວຍ ງານ ດ້ວຍ ການ ຈົກ ສະຫລາກ
ເພາະວ່າພວກ ເຈົ້າໜ້າທີ່ຂອງສະຖານທີ່ບໍລິສຸດ ແລະ ເຈົ້າໜ້າທີ່ ແຫ່ງພຣະວິຫານຂອງ ພຣະເຈົ້າ
ມາຈາກລູກຊາຍຂອງ ເອເລອາຊາ ກັບລູກຊາຍຂອງ ອີທາມາ 6ແລະ ເຊມາຢາ ລູກຊາຍ ເນທາ-
ເນນ ເປັນເລຂາຊຶ່ງເປັນຄົນ ເລວີ ໂດຍໄດ້ບັນທຶກໄວ້ຕໍ່ພຣະພັກກະສັດຕໍ່ໜ້າເຈົ້ານາຍ ແລະປະ-
ໂລຫິດ ຊາໂດກ ແລະ ອາຮີເມເລັກ ລູກຊາຍ ອາບີອາທາ ແລະຕໍ່ໜ້າຫົວໜ້າບັນພະບູລຸດຂອງ
ປະໂລຫິດ ແລະຂອງຄົນ ເລວີ: ພວກເຂົາຈົກສະຫລາກຄອບຄົວໜຶ່ງຈາກ ເອເລອາຊາ ແລະ
ຄອບຄົວໜຶ່ງຈາກ ອີທາມາ
7ສະຫລາກທຳອິດຕົກຖືກ ເຢໂຮຢາຣິບ ທີສອງຕົກຖືກ ເຢດາຢາ
8ທີສາມຕົກຖືກ ຮາຣິມ ທີສີ່ຕົກຖືກ ເສໂອຣິມ
9ທີຫ້າຕົກຖືກ ມັນກີຢາ ທີຫົກຕົກຖືກ ມີຢາມິນ
10ທີເຈັດຕົກຖືກ ຮັກໂກດ ທີແປດຕົກຖືກ ອາບີຢາ
11ທີເກົ້າຕົກຖືກ ເຢຊູອາ ທີສິບຕົກຖືກ ເຊການີອາ
12ທີສິບເອັດຕົກຖືກ ເອລີຢາຊິບ ທີສິບສອງຕົກຖືກຢາກີມ
13ທີສິບສາມຕົກຖືກຮຸບປາ ທີສິບສີ່ຕົກຖືກ ເຢເຊເບອາບ
14ທີສິບຫ້າຕົກຖືກ ບິນກາ ທີສິບຫົກຕົກຖືກ ອິມເມ
15ທີສິບເຈັດຕົກຖືກ ເຮຊີ ທີສິບແປດຕົກຖືກຮາບປິດເຊັດ
16ທີສິບເກົ້າຕົກຖືກ ເປທາຮີຢາ ທີຊາວຕົກຖືກ ເຢເຮັດຊະເກັນ
17ທີຊາວເອັດຕົກຖືກຢາກິນ ທີຊາວສອງຕົກຖືກ ກາມູນ
18ທີຊາວສາມຕົກຖືກ ເດລາຢາ ທີຊາວສີ່ຕົກຖືກ ມາອາຊີຢາ
19ຄົນ ເຫລົ່ານີ້ ມີການ ກຳນົດ ໜ້າທີ່ ຂອງ ພວກ ເຂົາ ໃນ ການ ບົວລະບັດ ເພື່ອທີ່ ຈະ ເຂົ້າ ໄປ ໃນ

ພຣະວິຫານຂອງພະຜູ້ເປັນເຈົ້າຕາມໜ້າທີ່ ແລະລະບຽບການຊຶ່ງອາໂຣນພໍ່ຂອງພວກເຂົາໄດ້ຕັ້ງ
ໄວ້ສຳລັບພວກເຂົາ ດັ່ງທີ່ພຣະຜູ້ເປັນເຈົ້າພຣະເຈົ້າແຫ່ງອິສຣາເອນໄດ້ສັ່ງພວກເຂົາໄວ້.

## ເຊື້ອສາຍຂອງໂກຣາດ

20ສ່ວນພວກລູກຫລານເລວີທີ່ຍັງເຫລືອຢູ່ມີຄື: ຈາກລູກຊາຍຂອງອຳຣາມ; ຊູບາເອນ ຈາກ
ລູກຊາຍຂອງຊູບາເອນ ແມ່ນເຢເດຢາ
21ຝ່າຍເຣຣາບີຢາ ຄືຈາກລູກຊາຍຂອງເຣຣາບີຢາ; ອິດຊີຢາເປັນຫົວໜ້າ
22ຈາກຄົນອິດຊະຣາ: ເຊໂລມິດ, ຈາກລູກຊາຍຂອງເຊໂລມິດແມ່ນຢາຮາດ
23ແລະຈາກພວກລູກຊາຍຂອງເຮັບໂຣນຄື: ເຢຣີຢາຜູ້ເປັນຫົວໜ້າ, ອາມາຣີຢາຜູ້ທີສອງ,
ຢາຮາຊີເອນຜູ້ທີສາມ, ເຢກາເມອາມຜູ້ທີສີ່
24ພວກລູກຊາຍຂອງອຸດຊີເອນຄື: ມີກາ, ລູກຊາຍຂອງມີກາຄື ຊາມີ
25ນ້ອງຊາຍຂອງມີກາຄື ອິດຊີຢາ, ລູກຊາຍຂອງອິດຊີຢາຄື ເຊຄາຣີຢາ

## ເຊື້ອສາຍຂອງເມຣາຣີ

26ລູກຊາຍຂອງເມຣາຣີຊື່ວ່າ ມາລີ ແລະມູຊີ, ລູກຊາຍຂອງຢາອາຊີຢາຊື່ວ່າ ເບໂນ
27ຝ່າຍລູກຫລານຂອງເມຣາຣີ, ຂອງຢາອາຊີຢາ ເບໂນ ໂຊຮາມ ຊາກູ ແລະ ອິບຣີ
28ຈາກມາລີຄື ເອເລອາຊາຊຶ່ງເພິ່ນບໍ່ມີລູກຊາຍ
29ຈາກກີເຊ ພວກລູກຊາຍຂອງກີເຊ ຄື ເຢຣາເມເອນ.
30ລູກຊາຍຂອງມູຊີຊື່ວ່າ ມາລີ, ເອເດ ແລະເຢຣີໂມດ ຄົນເຫລົ່ານີ້ເປັນລູກຊາຍຂອງຄົນ
ເລວີ ຕາມຄອບຄົວບັນພະບູລຸດຂອງພວກເຂົາ
31ຈຳພວກຄົນເຫລົ່ານີ້ແຕ່ລະຫົວໜ້າຄອບຄົວບັນພະບູລຸດ ແລະນ້ອງຊາຍຂອງພວກເຂົາກໍຄື
ກັນໄດ້ຈັບສະຫລາກໄດ້ຢ່າງດຽວກັບພີ່ນ້ອງຂອງພວກເຂົາ ຄື ລູກຊາຍຂອງອາໂຣນ ແລະພີ່-
ນ້ອງຂອງພວກເຂົາກໍໄດ້ຈົກສະຫລາກຕໍ່ໜ້າກະສັດດາວິດ, ຊາໂດກ, ອາຮີເມເລັກ ແລະຕໍ່ຫົວ-
ໜ້າບັນພະບູລຸດຂອງປະໂລຫິດ ແລະຂອງຄົນເລວີ

# ບົດທີ 25

## ພວກນັກດົນຕີ ແລະນັກຮ້ອງສຳລັບພຣະວິຫານ

1ດາວິດ ແລະຜູ້ບັນຊາການກອງທັບໄດ້ຄັດເລືອກເອົາບາງຄົນຈາກພວກລູກຊາຍ ຂອງອາ-
ສັບ, ເຮມານ ແລະຂອງເຢດູທູນໄວ້ສຳລັບການບົວລະບັດ ພວກນີ້ຈະທຳນວາຍດ້ວຍພິນຄູ່
ດ້ວຍພິນໃຫຍ່ ແລະດ້ວຍແສ່ງ ຈຳນວນຄົນທີ່ເຮັດວຽກຕາມໜ້າທີ່ຂອງພວກເຂົາມີຄື:
2ລູກຊາຍຂອງອາສັບຄື ຊາກູເຣ, ໂຢເຊັບ, ເນທານີອາ ແລະອາຊາເຣລາ ລູກຊາຍຂອງ
ອາສັບ ໂດຍພາຍໃຕ້ການແນະນຳຂອງອາສັບ ທີ່ເປັນຜູ້ທຳນວາຍຕາມພະລາຊະດຳລັດສັ່ງ
ຂອງກະສັດ
3ຈາກເຢດູທູນ ຄືພວກລູກຊາຍຂອງເຢດູທູນຊື່ວ່າ ເກດາລີຢາ, ເຊຣີ, ເຢຊາຢາ, ຊີເມອີ
ຮາຊາບີຢາ ແລະມັດຕີທີຢາ ຫົກຄົນພາຍໃຕ້ການນຳຂອງເຢດູທູນພໍ່ຂອງພວກເຂົາ ຜູ້ຊຶ່ງພະ-

ຍາກອນດ້ວຍພິນຄູ່ໃນການໂມທະນາແລະການສັນລະເສີນພຣະຜູ້ເປັນເຈົ້າ
[4]ຈາກເຮມານ ຄືລູກຊາຍຂອງເຮມານ ຊື່ວ່າ ບຸກກີຢາ, ມັດຕານີຢາ, ອຸດຊີເອນ, ເຊບູ-
ເອນ, ເຢຣີໂມດ ຮານານີຢາ ຮານານີ, ເອລີອາທາ, ກິດດັນຕີ, ໂຣມານຕີ-ເອເຊີ, ໂຢຊະເບ-
ກາຊາ, ມັນໂລທີ, ໂຮທີ ແລະມາຮາຊີໂອດ [5]ຄົນເຫລົ່ານີ້ເປັນລູກຊາຍຂອງເຮມານຜູ້ທຳນວາຍ
ຂອງກະສັດຕາມພຣະທຳຂອງພຣະເຈົ້າ ເພື່ອຈະເປົ່າແກ ແລະພຣະເຈົ້າໄດ້ປະທານລູກຊາຍ
ສິບສີ່ຄົນ ແລະລູກສາວສາມຄົນໃຫ້ເຮມານ
[6]ພວກເຂົາທຸກຄົນຢູ່ພາຍໃຕ້ຄຳແນະນຳຜູ້ເປັນພໍ່ຂອງພວກເຂົາ ເພື່ອປະກອບບົດເພງໃນ
ພຣະວິຫານຂອງພຣະຜູ້ເປັນເຈົ້າດ້ວຍແສ່ງ, ພິນໃຫຍ່ ແລະພິນຄູ່ ເພື່ອການບົວລະບັດໃນ
ພຣະວິຫານຂອງພຣະເຈົ້າ; ອາສັບ ເຢດູທູນ ແລະເຮມານ ຢູ່ພາຍໃຕ້ພະລາຊະດຳລັດສັ່ງ
ຂອງກະສັດ [7]ຈຳນວນຂອງພວກເຂົາກັບພວກພີ່ນ້ອງຂອງພວກເຂົາທີ່ໄດ້ຮັບການຝຶກໃນການ
ຮ້ອງເພງຖວາຍພຣະຜູ້ເປັນເຈົ້າທີ່ມີຄວາມຊຳນານທັງໝົດມີສອງຮ້ອຍແປດສິບແປດຄົນ.

## ການຈັບສະຫລາກໜ້າທີ່ຂອງແຕ່ລະຄົນ

[8]ພວກເຂົາຈັບສະຫລາກສຳລັບໜ້າທີ່ຂອງພວກເຂົາທັງຜູ້ນ້ອຍ ຜູ້ໃຫຍ່ ຄູສອນ ແລະລູກສິດ
ກໍຄືກັນ

[9]ສະຫລາກທຳອິດຕົກຖືກພວກຂອງອາສັບໄດ້ແກ່ໂຢເຊັບ ທີສອງໄດ້ແກ່ເກດາລີຢາ ພ້ອມ
ກັບພີ່ນ້ອງ ແລະລູກຊາຍຂອງລາວສິບສອງຄົນ

[10]ທີສາມຕົກຖືກຊາກູເຣ ພ້ອມກັບລູກຊາຍຂອງລາວແລະພີ່ນ້ອງຂອງລາວສິບສອງຄົນ

[11]ທີສີ່ຕົກຖືກອິດຊະຣີ ພ້ອມກັບລູກຊາຍຂອງລາວ ແລະພີ່ນ້ອງຂອງລາວສິບສອງຄົນ

[12]ທີຫ້າຕົກຖືກເນທານີອາ ພ້ອມກັບລູກຊາຍຂອງລາວແລະພີ່ນ້ອງຂອງລາວສິບສອງຄົນ

[13]ທີຫົກຕົກຖືກບຸກກີຢາ ພ້ອມກັບລູກຊາຍຂອງລາວແລະພີ່ນ້ອງຂອງລາວສິບສອງຄົນ

[14]ທີເຈັດຕົກຖືກເຢຊາເຣລາ ພ້ອມກັບລູກຊາຍຂອງລາວ ແລະພີ່ນ້ອງຂອງລາວສິບສອງຄົນ

[15]ທີແປດຕົກຖືກເຢຊາຢາ ພ້ອມກັບລູກຊາຍຂອງລາວແລະພີ່ນ້ອງຂອງລາວສິບສອງຄົນ

[16]ທີເກົ້າຕົກຖືກມັດຕານີຢາ ພ້ອມກັບລູກຊາຍຂອງລາວແລະພີ່ນ້ອງຂອງລາວສິບສອງຄົນ

[17]ທີສິບຕົກຖືຊີເມອີ ພ້ອມກັບລູກຊາຍຂອງລາວ ແລະພີ່ນ້ອງຂອງລາວສິບສອງຄົນ

[18]ທີສິບເອັດຕົກຖືກອັດຊາເຣນ ພ້ອມກັບລູກຊາຍຂອງລາວ ແລະພີ່ນ້ອງຂອງລາວສິບສອງ
ຄົນ

[19]ທີສິບສອງຕົກຖືກຮາຊາບີຢາ ພ້ອມກັບລູກຊາຍຂອງລາວ ແລະພີ່ນ້ອງຂອງລາວສິບສອງ
ຄົນ

[20]ທີສິບສາມຕົກຖືກຊູບາເອນ ພ້ອມກັບລູກຊາຍຂອງລາວ ແລະພີ່ນ້ອງຂອງລາວສິບສອງ
ຄົນ

[21]ທີສິບສີ່ຕົກຖືກມັດຕີທີຢາ ພ້ອມກັບລູກຊາຍຂອງລາວແລະພີ່ນ້ອງຂອງລາວສິບສອງຄົນ

[22]ທີສິບຫ້າຕົກຖືກເຢເຣໂມດ ພ້ອມກັບລູກຊາຍຂອງລາວ ແລະພີ່ນ້ອງຂອງລາວສິບສອງຄົນ

[23]ທີສິບຫົກຕົກຖືກຮານານີຢາ ພ້ອມກັບລູກຊາຍຂອງລາວ ແລະພີ່ນ້ອງຂອງລາວສິບສອງ

ຄົນ

24ທີສິບເຈັດຕົກຖືກໂຢຊະເບກາຊາ ພ້ອມກັບລູກຊາຍຂອງລາວ ແລະພີ່ນ້ອງຂອງລາວສິບ
ສອງຄົນ

25ທີສິບແປດຕົກຖືກຮານານີ ພ້ອມກັບລູກຊາຍຂອງລາວ ແລະພີ່ນ້ອງຂອງລາວສິບສອງຄົນ

26ທີສິບເກົ້າຕົກຖືກມັນໂລທີ ພ້ອມກັບລູກຊາຍຂອງລາວ ແລະພີ່ນ້ອງຂອງລາວສິບສອງຄົນ

27ທີຊາວຕົກຖືກເອລີອາທາ ພ້ອມກັບລູກຊາຍຂອງລາວແລະພີ່ນ້ອງຂອງລາວສິບສອງຄົນ

28ທີຊາວເອັດຕົກຖືກໂຮທີ ພ້ອມກັບລູກຊາຍຂອງລາວ ແລະພີ່ນ້ອງຂອງລາວສິບສອງຄົນ

29ທີຊາວສອງຕົກຖືກກິດດັນຕີ ພ້ອມກັບລູກຊາຍຂອງລາວ ແລະພີ່ນ້ອງຂອງລາວສິບສອງ
ຄົນ

30ທີຊາວສາມຕົກຖືກມາຮາຊີໂອດ ພ້ອມກັບລູກຊາຍຂອງລາວ ແລະພີ່ນ້ອງຂອງລາວສິບ
ສອງຄົນ

31ທີຊາວສີ່ຕົກຖືກໂຣມານຕີ-ເອເຊີ ພ້ອມກັບລູກຊາຍຂອງລາວ ແລະພີ່ນ້ອງຂອງລາວສິບ
ສອງຄົນ

# ບົດທີ 26

## ການຈັດກອງເຝົ້າຍາມປະຕູສຳລັບພຣະວິຫານຂອງພຣະເຈົ້າ

1ຝ່າຍກອງເຝົ້າຍາມປະຕູແມ່ນຈາກພວກໂກຣາມີ, ເມເຊເລມີຢາລູກຊາຍໂກເຣ ຈາກລູກ
ຫລານຂອງອາສັບ

2ເມເຊເລມີຢາມີລູກຊາຍຄື ເຊຄາຣີຢາລູກກົກ, ເຢດີອາເອນຜູ້ທີສອງ, ເຊບາດີຢາຜູ້ທີສາມ,
ຢາດນີເອນຜູ້ທີສີ່.
3ເອລາມຜູ້ທີຫ້າ, ເຢໂຮຮານັນຜູ້ທີຫົກ, ເອລີເອໂຮນາຍຜູ້ທີເຈັດ

4ແລະໂອເບັດເອໂດມມີລູກຊາຍຄື ເຊມາຢາເປັນລູກກົກ, ເຢໂຮຊາບັດຜູ້ທີສອງ, ໂຢອາຜູ້ທີ
ສາມ, ສາກາຜູ້ທີສີ່, ເນທາເນນຜູ້ທີຫ້າ
5ອຳມີເອນຜູ້ທີຫົກ, ອິດຊາຄາຜູ້ທີເຈັດ, ເປອູເລທາຍ
ຜູ້ທີແປດ ເພາະວ່າພຣະເຈົ້າໄດ້ອຳນວຍພຣະພອນໃຫ້ແກ່ເພິ່ນແລ້ວ

6ພ້ອມທັງເຊມາຢາລູກຊາຍຂອງເພິ່ນດ້ວຍ ຊຶ່ງມີລູກຊາຍຫລາຍຄົນເກີດແກ່ລາວເປັນຜູ້ປົກ-
ຄອງໃນຄອບຄົວພໍ່ຂອງພວກເຂົາ ເພາະພວກເຂົາເປັນຄົນມີອຳນາດ ແລະກ້າຫານ
7ລູກຊາຍ
ຂອງເຊມາກີຢາຄື ໂອທະນີ, ເຣຟາເອນ, ໂອເບັດ ແລະເອນຊາບັດ; ພີ່ນ້ອງຂອງລາວເປັນ
ຄົນທີ່ມີຄວາມກ້າຫານຄື ເອລີຮູ ແລະເຊມາກີຢາ

8ຄົນທັງໝົດເຫລົ່ານີ້ເປັນລູກຫລານຂອງໂອເບັດເອໂດມ, ທັງລາວເອງກັບລູກຊາຍ ແລະພີ່-
ນ້ອງຂອງລາວເປັນຄົນທີ່ມີຄວາມສາມາດ, ມີກຳລັງເໝາະສົມແກ່ການບົວລະບັດ, ໂດຍມາຈາກ
ໂອເບັດເອໂດມຫົກສິບສອງຄົນ

9ແລະເມເຊເລມີຢາມີລູກຊາຍ ແລະພີ່ນ້ອງເປັນຄົນທີ່ມີກຳລັງຄວາມສາມາດສິບແປດຄົນ

10ແລະໂຮສາຜູ້ເປັນລູກຫລານຂອງເມຣາຣີມີລູກຊາຍຄື ຊິມຣີຜູ້ເປັນຫົວໜ້າ (ເຖິງລາວຈະບໍ່
ແມ່ນລູກຫົວປີ ພໍ່ຂອງລາວກໍໃຫ້ລາວເປັນຫົວໜ້າ)
11ຮິນກີຢາຜູ້ທີສອງ, ເຕບາລີຢາຜູ້ທີສາມ,

ເຊຄາຣີຢາຜູ້ທີສີ່ລູກຊາຍ ແລະພີ່ນ້ອງຂອງ ໂຮສາທັງໝົດມີສິບສາມຄົນ
[12]ຄົນທັງຫລາຍ ເຫລົ່ານີ້ ໄດ້ປະຈໍາການ ເຝົ້າຍາມປະຕູ, ພວກຫົວໜ້າຂອງພວກ ເຂົາມີໜ້າທີ່
ເຊັ່ນດຽວກັບພີ່ນ້ອງ ຂອງພວກເຂົາໃນການບົວລະບັດໃນພຣະວິຫານຂອງ ພຣະຜູ້ເປັນເຈົ້າ

## ການຈັບສະຫລາກ ເພື່ອຈະຮູ້ວ່າໃຜຢູ່ປະຕູໃດ

[13]ພວກ ເຂົາຈັບສະຫລາກກັນຕາມຄອບຄົວບັນພະບູລຸດຂອງພວກເຂົາ ທັງຜູ້ນ້ອຍ ແລະຜູ້
ໃຫຍ່ກໍເຮັດຄືກັນ ສໍາລັບວ່າໃຜຢູ່ປະຕູໃດ [14]ສະຫລາກດ້ານຕາເວັນອອກຕົກຖືກ ເຊເລມີຢາ,
ເພິ່ນຈັບສະຫລາກໃຫ້ລູກຊາຍຂອງເພິ່ນ ຄື ເຊຄາຣີຢາດ້ວຍ ລາວ ເປັນທີ່ປຶກສາທີ່ສະຫລຽວສະ-
ຫລາດ ແລະສະຫລາກຂອງລາວຕົກຖືກດ້ານເໜືອ [15]ສະຫລາກທາງທິດໃຕ້ໄດ້ຕົກຖືກ ໂອເບັດ
ເອໂດມ, ສາງເກັບມ້ຽນສິ່ງຂອງນັ້ນຈັດໃຫ້ລູກຊາຍຂອງເພິ່ນເບິ່ງແຍງ [16]ສະຫລາກດ້ານຕາ-
ເວັນຕົກນັ້ນຕົກຖືກຊຸບປີມ ແລະ ໂຮສາ ທີ່ປະຕູຊັນເລເກັດ, ຂຶ້ນໄປຕາມຖະໜົນ ມີຜູ້ເຝົ້າຍາມ
ຕິດຕໍ່ກັນໄປ [17]ດ້ານຕາເວັນອອກມີຄົນ ເລວີຫົກຄົນ ດ້ານເໜືອທຸກມື້ມີສີ່ຄົນ ດ້ານໃຕ້ມື້ລະສີ່ຄົນ
ທຸກມື້ ແລະມີສອງຄູ່ຍາມຢູ່ທີ່ສາງເຄື່ອງ [18]ສໍາລັບລະບຽງທາງຕາເວັນຕົກນັ້ນ ມີສີ່ຄົນຢູ່ທີ່ຖະ-
ໜົນແລະສອງຄົນຍາມຢູ່ທີ່ລະບຽງ [19]ຄົນເຫລົ່ານີ້ເປັນພວກເຝົ້າຍາມປະຕູຊຶ່ງມາຈາກລູກຫລານ
ຂອງ ໂກຣາ ແລະລູກຫລານຂອງ ເມຣາຣີ

## ຄົນເລວີທີ່ເບິ່ງແຍງຄັງພຣະວິຫານຂອງພຣະເຈົ້າ

[20]ຈາກຄົນ ເລວີນັ້ນ, ອາຮີຢາເປັນຜູ້ເບິ່ງແຍງຄັງພຣະວິຫານຂອງ ພຣະເຈົ້າ ແລະຄັງສິ່ງຂອງ
ຖວາຍ [21]ລູກຊາຍຂອງ ລາດານ, ພວກລູກຊາຍຄົນ ເກໂຊນຂອງ ລາດານ, ບັນດາຫົວໜ້າຫົວ-
ໜ້າບັນພະບູລຸດຂອງ ລາດານຄື ເຢຮີເອລີ ຄົນ ເກໂຊນ. [22]ລູກຊາຍຂອງ ເຢຮີເອລີ ຄື ເຊທາມ
ແລະ ໂຢເອນນ້ອງຊາຍຂອງລາວ ຊຶ່ງເປັນຜູ້ເບິ່ງແຍງຄັງພຣະວິຫານຂອງ ພຣະຜູ້ເປັນເຈົ້າ
[23]ຈາກຄົນອໍາຣາມ, ຄົນອິດຊະຮາ, ຄົນ ເຮັບໂຣນ ແລະຈາກຄົນອຸດຊີເອນ
[24]ແລະ ເຊບູເອນ ລູກຊາຍຂອງ ເກໂຊມ ຜູ້ເປັນລູກຊາຍຂອງ ໂມເຊ ຊຶ່ງເປັນນາຍຄັງໃຫຍ່
[25]ພີ່ນ້ອງຂອງລາວ ຊາວ ເອລີເອເຊ ຄື ເຣຮາບີຢາລູກຊາຍລາວ, ລູກຊາຍຂອງ ເຣຮາບີຢາຄື
ເຢຊາຢາ ລູກຊາຍຂອງ ເຢຊາຢາຄື ໂຢຣາມ, ລູກຊາຍຂອງ ໂຢຣາມຄື ຊິກຣີ, ລູກຊາຍຂອງຊິ-
ກຣີຄື ເຊໂລມິດ [26]ເຊໂລມິດ ແລະພີ່ນ້ອງຂອງລາວເປັນຜູ້ເບິ່ງແຍງຄັງ ເຄື່ອງຖວາຍທັງໝົດ ຊຶ່ງ
ກະສັດ ດາວິດ ແລະບັນດາບັນພະບູລຸດທັງຫລາຍທີ່ເປັນຫົວໜ້າ ແລະນາຍພັນນາຍຮ້ອຍ ພ້ອມ
ທັງຜູ້ບັນຊາການກອງທັບໄດ້ມອບຖວາຍໄວ້ [27]ຊຶ່ງພວກເພິ່ນຍຶດມາໄດ້ຈາກສົງຄາມ ພວກເພິ່ນ
ໄດ້ມອບຖວາຍ ເພື່ອການສ້ອມແປງພຣະວິຫານຂອງ ພຣະຜູ້ເປັນເຈົ້າ [28]ແລະສິ່ງຂອງທີ່ຊາມູ-
ເອນຜູ້ທໍານວາຍ, ຊາອູນລູກຊາຍ ກີເຊ ແລະອັບເນລູກຊາຍ ເນ ແລະ ໂຢອາບລູກຊາຍນາງ
ເຊຣູຢາໄດ້ຖວາຍໄວ້ ເຄື່ອງຖວາຍທັງໝົດຢູ່ໃນພາຍໄຕ້ການເບິ່ງແຍງຂອງ ເຊໂລມິດ ແລະພີ່-
ນ້ອງຂອງລາວ

## ພວກເຈົ້າໜ້າທີ່ ແລະຜູ້ພິຈາລະນາສໍາລັບອິສຣາເອນ

[29]ຈາກຄົນອິດຊະຮາ, ເກນານີຢາ ແລະລູກຊາຍຂອງລາວໄດ້ຮັບແຕ່ງຕັ້ງໃຫ້ມີໜ້າທີ່ຮັບຜິດ-
ຊອບນອກເຂດສໍາລັບຄວບຄຸມອິສຣາເອນ ໂດຍໃຫ້ເປັນເຈົ້າໜ້າທີ່ ແລະເປັນຜູ້ຕັດສິນ

[30]ຈາກຄົນ ເຮັບໂຣນ; ຮາຊາບີຢາ ແລະພີ່ນ້ອງຂອງລາວເປັນຄົນທີ່ມີຄວາມກ້າຫານມີໜຶ່ງພັນ
ເຈັດຮ້ອຍຄົນ ໂດຍເປັນຜູ້ເບິ່ງແຍງ ອິສຣາເອນ ທາງຟາກຕາເວັນຕົກຂອງແມ່ນ້ຳຢໍແດນ ຟາກນັ້ນ
ໃນເລື່ອງກິດຈະການທັງໝົດຂອງ ພຣະຜູ້ເປັນເຈົ້າ ແລະລາຊະການຂອງກະສັດ

[31]ຈາກຄົນ ເຮັບໂຣນ ເຢຣີຢາ ເປັນຫົວໜ້າ; ໃນປີທີສີ່ສິບຂອງລາຊະການ ດາວິດ ພວກເຂົາ
ໄດ້ຄົ້ນຫາຊາວ ເຮັບໂຣນ ຕາມເຊື້ອສາຍ ຕາມບັນພະບູລຸດ ແລະໃນພວກນັ້ນພວກເຂົາໄດ້ພົບ
ຄົນທີ່ມີຄວາມສາມາດ ແລະກ້າຫານ ໃນ ເມືອງ ຢາເຊ ແຂວງ ກີເລອາດ [32]ກະສັດ ດາວິດ ໄດ້
ແຕ່ງຕັ້ງ ໃຫ້ເພິ່ນ ແລະພີ່ນ້ອງຂອງ ເພິ່ນ ຄືຄົນທີ່ກ້າຫານສອງພັນເຈັດຮ້ອຍຄົນຈາກເຈົ້ານາຍທັງ-
ຫລາຍ ໃຫ້ເປັນຜູ້ເບິ່ງແຍງຄົນ ຣູເບັນ, ຄົນ ຄາດ ແລະຄົນຕະກູນ ມານາເຊ ເຄິ່ງໜຶ່ງ ໃນກິດຈະ-
ການທຸກຢ່າງກ່ຽວກັບ ພຣະເຈົ້າ ແລະກິດຈະການກ່ຽວກັບກະສັດ

# ບົດທີ 27

## ກອງເວນຍາມບ່ອນຕ່າງໆ ໃນແຕ່ລະເດືອນ

[1]ຕໍ່ໄປນີ້ເປັນລາຍຊື່ຂອງລູກຫລານ ອິສຣາເອນ ຕາມຈຳນວນຂອງພວກເຂົາ ຄື ບັນດາບັນ-
ພະບູລຸດທີ່ເປັນຫົວໜ້າບັນດານາຍພັນ, ນາຍຮ້ອຍ ແລະບັນດາເຈົ້າໜ້າທີ່ຜູ້ຮັບໃຊ້ກະສັດໃນລາ-
ຊະການທຸກຢ່າງທີ່ກ່ຽວກັບກອງ ເວນຍາມທີ່ເຂົ້າມາ ແລະອອກໄປ ທຸກເດືອນຕະຫລອດປີ, ກອງ
ເວນຍາມໜຶ່ງໆ ມີຈຳນວນສອງໝື່ນສີ່ພັນຄົນ

[2]ຫົວໜ້າຂອງກອງ ເວນຍາມທຳອິດທີ່ປະຈຳການ ໃນ ເດືອນທີໜຶ່ງ ແມ່ນ ຢາໂຊເບອາມ ລູກຊາຍ
ຊັບດີເອນ, ໃນກອງ ເວນຍາມຂອງລາວມີສອງໝື່ນສີ່ພັນຄົນ [3]ລາວມາຈາກລູກຫລານຂອງ ເປ-
ເຣັດ ແລະເປັນຫົວໜ້າຜູ້ບັນຊາການກອງທັບທັງໝົດໃນເດືອນທຳອິດ

[4]ຫົວໜ້າ ຂອງ ກອງ ເວນຍາມ ທີ່ ເຂົ້າ ປະຈຳການ ໃນ ເດືອນ ທີ ສອງ ແມ່ນ ໂດດາຍ ຄົນ ອາໂຮອາ
ມີກໂລດ ເປັນຜູ້ບັງຄັບບັນຊາກອງ ເວນຍາມຂອງລາວ, ໃນກອງ ເວນຂອງລາວມີສອງໝື່ນສີ່ພັນ
ຄົນ

[5]ຜູ້ບັງຄັບບັນຊາການກອງທັບຄົນທີສາມສຳລັບ ເດືອນທີສາມຄື ເບນາຢາ ລູກຊາຍ ເຢໂຮຢາ-
ດາ ຊຶ່ງເປັນຫົວໜ້າປະໂລຫິດຄົນໜຶ່ງ, ໃນກອງເວນຂອງລາວມີສອງໝື່ນສີ່ພັນຄົນ [6]ເບນາຢາ
ເປັນຄົນທີ່ເຂັ້ມແຂງກ້າຫານໃນຈຳນວນສາມສິບຄົນ ແລະເປັນຜູ້ບັນຊາການຂອງສາມສິບຄົນນັ້ນ
ແລະ ອຳມີຊາບັດ ລູກຊາຍຂອງລາວກໍຢູ່ໃນກອງເວນຂອງລາວ

[7]ຜູ້ບັນຊາການຄົນທີສີ່ສຳລັບ ເດືອນທີສີ່ແມ່ນ ອາສາເຮນ ນ້ອງຊາຍຂອງ ໂຢອາບ ແລະ ເຊ-
ບາດີຢາ ລູກຊາຍຂອງລາວເປັນຜູ້ຮອງຈາກລາວ, ໃນກອງເວນຂອງລາວມີສອງໝື່ນສີ່ພັນຄົນ

[8]ຜູ້ບັນຊາການຄົນທີ່ຫ້າສຳລັບ ເດືອນທີ່ຫ້າຄື ຊາມຮູດ ຄົນ ອິດຊະຣາ, ໃນກອງເວນຂອງລາວ
ມີສອງໝື່ນສີ່ພັນຄົນ

[9]ຜູ້ບັນຊາການຄົນທີຫົກສຳລັບ ເດືອນທີຫົກຄື ອີຣາ ລູກຊາຍ ອິກເກດ ຊາວ ເຕໂກອາ ໃນ
ກອງເວນຂອງລາວມີສອງໝື່ນສີ່ພັນຄົນ

[10]ຜູ້ບັນຊາການຜູ້ທີເຈັດສຳລັບເດືອນທີເຈັດຄື ເຮເລັດ ຊາວ ເປໂລນ ເປັນຄົນ ເອຟຣາຢິມ ໃນ

ກອງເວນຍາມຂອງລາວ ມີສອງໝື່ນສີ່ພັນຄົນ
[11]ຜູ້ບັນຊາການຜູ້ທີແປດສຳລັບເດືອນທີແປດຄື ສິບເບກາຍຊາວຮູຊາຍ ຄົນເຊຣາ ໃນກອງ
ເວນຂອງລາວມີ ສອງໝື່ນສີ່ພັນຄົນ
[12]ຜູ້ບັນຊາການຜູ້ທີເກົ້າສຳລັບເດືອນທີເກົ້າຄື ອາບີເອເຊຊາວອານາໂທດ ຄົນເບັນຢາມິນ
ໃນກອງເວນຂອງລາວມີສອງໝື່ນສີ່ພັນຄົນ
[13]ຜູ້ບັນຊາການຜູ້ທີສິບສຳລັບເດືອນທີສິບຄື ມາຣາຣາຍຊາວເນໂຕຟາຈາກຄົນເຊຣາ ໃນ
ກອງເວນຂອງລາວມີສອງໝື່ນສີ່ພັນຄົນ
[14]ຜູ້ບັນຊາການຜູ້ທີ່ສິບເອັດສຳລັບເດືອນທີສິບເອັດຄື ເບນາຢາຊາວປີຣາໂທນຈາກຄົນເອ-
ຟຣາຢິມ ໃນກອງເວນຂອງລາວມີສອງໝື່ນສີ່ພັນຄົນ
[15]ຜູ້ບັນຊາການຜູ້ທີສິບສອງສຳລັບເດືອນທີສິບສອງຄື ເຮນດາຍຊາວເນໂຕຟາຈາກຄົນ
ໂອດນີເອນ ໃນກອງເວນຂອງລາວມີສອງໝື່ນສີ່ພັນຄົນ

## ຫົວໜ້າຂອງຕະກູນຕ່າງໆຂອງອິສຣາເອນ

[16]ຫົວໜ້າຕະກູນຕ່າງໆຂອງອິສຣາເອນຄື ເອລີເອເຊລູກຊາຍຊິກຣີເປັນຫົວໜ້າຄົນຣູເບັນ,
ເຊຟາຕີຢາລູກຊາຍມາອາກາເປັນຫົວໜ້າຄົນຊີເມໂອນ
[17]ຮາຊາບີຢາລູກຊາຍເກມູເອນເປັນຫົວໜ້າຄົນເລວີ ຊາໂດກເປັນຫົວໜ້າຄົນອາໂຣນ
[18]ເອລີຮູ ອ້າຍຄົນໜຶ່ງຂອງດາວິດເປັນຫົວໜ້າຄົນຢູດາ ມີອົມຣີລູກຊາຍມີກາເອນເປັນຫົວ-
ໜ້າຄົນອິດຊາຄາ
[19]ອິຊະມາຢາລູກຊາຍໂອບາດີຢາເປັນຫົວໜ້າຄົນເຊບູລູນ; ເຢເຣໂມດລູກຊາຍອັດຊະຣີເອນ
ເປັນຫົວໜ້າຄົນນັບທາລີ
[20]ໂຮເຊອາລູກຊາຍອາຊາຊີຢາເປັນຫົວໜ້າຄົນເອຟຣາຢິມ; ໂຢເອນລູກຊາຍເປດາຢາເປັນ
ຫົວໜ້າມານາເຊເຄິ່ງຕະກູນ
[21]ສຳລັບ ມານາເຊ ເຄິ່ງຕະກູນ ໃນ ກີເລອາດ ແມ່ນ ອິດໂດ ລູກຊາຍ ເຊຄາຣີຢາ ເປັນຫົວໜ້າ;
ຢາອາສີເອນລູກຊາຍອັບເນເປັນຫົວໜ້າສຳລັບຄົນເບັນຢາມິນ
[22]ສຳລັບຄົນດານແມ່ນ ອັດຊາເຣນລູກຊາຍເຢໂຣຮາມເປັນຫົວໜ້າ ຄົນເຫລົ່ານີ້ເປັນຫົວໜ້າ
ຕະກູນຕ່າງໆ ຂອງອິສຣາເອນ

## ການນັບຈຳນວນປະຊາຊົນບໍ່ສຳເລັດ

[23]ດາວິດບໍ່ໄດ້ນັບຈຳນວນຄົນທີ່ມີອາຍຸຕ່ຳກວ່າຊາວປີ ເພາະພຣະຜູ້ເປັນເຈົ້າໄດ້ກ່າວໄວ້ວ່າ
ພຣະອົງຈະເຮັດໃຫ້ພວກອິສຣາເອນເພີ່ມທະວີຫລາຍຂຶ້ນເໝືອນດັ່ງດວງດາວທັງຫລາຍໃນທ້ອງ-
ຟ້າ [24]ໂຢອາບລູກຊາຍນາງເຊຣູຢາໄດ້ເລີ່ມຕົ້ນນັບ ແຕ່ບໍ່ສຳເລັດຍ້ອນເຫດການນີ້ ພຣະພິໂລດ
ຈຶ່ງຢູ່ເໜືອຊາວອິສຣາເອນ ແລະໃນຈຳນວນທີ່ນັບນັ້ນບໍ່ໄດ້ບັນທຶກໄວ້ໃນໜັງສືຂ່າວຄາວຂອງ
ກະສັດດາວິດ

## ເຈົ້າໜ້າທີ່ຕ່າງໆໃນລາຊະການຂອງດາວິດ

[25]ອາຊະມາເວດລູກຊາຍອາດີເອນເປັນຜູ້ຮັບຜິດຊອບຄັງເງິນຂອງກະສັດ ແລະໂຢນາທານ

ລູກຊາຍຂອງ ອຸດຊີຢາ ເປັນຜູ້ຮັບຜິດຊອບຄັງນອກນະຄອນ, ໃນຫົວເມືອງ, ໃນຊົນນະບົດ
ແລະໃນບັນດາປ້ອມຍາມ
[26]ເອຊະຣີ ລູກຊາຍ ເກລູບ ເປັນຜູ້ເບິ່ງແຍງບັນດາຜູ້ທີ່ເຮັດໄຮ່ເຮັດນາຂອງກະສັດ
[27]ຊີເມອີ ຊາວ ຣາມາດ ປະຈຳການເບິ່ງແຍງສວນອະງຸ່ນ ແລະ ຊັບດີ ຊາວ ຊີບມີ ເບິ່ງແຍງຜະ-
ລິດຜົນຂອງສວນອະງຸ່ນ ໃນຫ້ອງເກັບນ້ຳອະງຸ່ນ
[28]ບາອານ-ຮານານ ຊາວ ເກເດ ເປັນຜູ້ເບິ່ງແຍງຕົ້ນໝາກກອກເທດ ແລະຕົ້ນໝາກເດື່ອທີ່ຢູ່
ຕາມທົ່ງພຽງ; ໂຢອາດ ເປັນຜູ້ເບິ່ງເບິ່ງແຍງຄັງນ້ຳມັນ
[29]ຊິດຣາຍ ຊາວ ຊາໂຣນ ເບິ່ງແຍງຝູງງົວ ແລະຕ້ອນຝູງງົວໄປກິນຫຍ້າຢູ່ທີ່ຊາໂຣນ; ຊາຟາດ
ລູກຊາຍ ອາດະລາຍ ເບິ່ງແຍງຝູງງົວທີ່ຢູ່ຕາມຮ່ອມພູ
[30]ແລະ ໂອບິນ ຄົນ ອິດຊະມາເອນ ເບິ່ງແຍງຝູງອູດ; ເຢເດຢາ ຊາວ ເມໂຣໂນດ ເບິ່ງແຍງລາ.
[31]ຢາຊິດ ຊາວ ຮັກຣີ ເບິ່ງແຍງຝູງ ແບ້ ແກະ, ບັນດາຄົນ ເຫລົ່ານີ້ ເປັນພະນັກງານທີ່ດູແລ ເບິ່ງ-
ແຍງຊັບສົມບັດຂອງກະສັດ ດາວິດ
[32]ໂຢນາທານ ລຸງຂອງ ດາວິດ ເປັນທີ່ປຶກສາ ເພິ່ນເປັນຄົນທີ່ມີຄວາມເຂົ້າໃຈ ແລະເປັນເລຂາ
ເຢຮີເອນ ລູກຊາຍ ຮັກໂມນີ ເປັນຜູ້ເບິ່ງແຍງລ້ຽງດູພວກລູກຊາຍ
[33]ອາຮີໂທເຟັນ ເປັນທີ່ປຶກສາຂອງກະສັດ ແລະ ຮູຊາຍ ຄົນ ອາຄີ ເປັນມິດສະຫາຍຂອງກະສັດ
[34]ເຢໂຮຢາດາ ລູກຊາຍ ເບນາຢາ ແລະ ອາບີອາທາ ເປັນຜູ້ເຮັດວຽກຕໍ່ຈາກ ອາຮີໂທເຟັນ; ໂຢ-
ອາບ ເປັນຜູ້ບັນຊາການກອງທັບຂອງກະສັດ

# ບົດທີ 28

## ດາວິດໃຫ້ຄຳປຶກສາແກ່ຊາວອິສຣາເອນ ແລະໂຊໂລໂມນຕໍ່ໜ້າປະຊາຊົນ

[1]ດາວິດ ໄດ້ເອີ້ນບັນດາເຈົ້ານາຍທັງໝົດຂອງ ອິສຣາເອນ ມາປະຊຸມໃນ ອິສຣາເອນ ຄື ຫົວໜ້າ
ຂອງຕະກູນ ແລະ ຜູ້ບັນຊາການກອງທັບທີ່ຮັບລາຊະການຕາມການເວນຍາມ, ນາຍພັນນາຍຮ້ອຍ
ແລະ ພະນັກງານທັງໝົດ ພວກທີ່ເບິ່ງແຍງຊັບສົມບັດ ແລະຝູງສັດຂອງກະສັດ ແລະລູກຊາຍຂອງ
ພະອົງ ພ້ອມກັບພະນັກງານລາຊະສຳນັກ ທະຫານທີ່ເກັ່ງກ້າສາມາດ ແລະວິລະບູລຸດທັງໝົດ
[2]ແລ້ວກະສັດ ດາວິດ ໄດ້ລຸກຢືນຂຶ້ນ ແລະກ່າວວ່າ “ພີ່ນ້ອງຂອງຂ້າພະເຈົ້າ ແລະປະຊາຊົນ
ຂອງຂ້າພະເຈົ້າ ຂໍຈົ່ງຟັງຂ້າພະເຈົ້າ ຂ້າພະເຈົ້າມີໃຈປະສົງທີ່ຈະສ້າງພຣະວິຫານຊຶ່ງເປັນບ່ອນ
ພັກຂອງຫີບຄຳໝັ້ນສັນຍາຂອງ ພຣະຜູ້ເປັນເຈົ້າ ແລະ ເພື່ອເປັນທີ່ຮອງພຣະບາດຂອງ ພຣະເຈົ້າ
ຂອງພວກເຮົາ ແລະຂ້າພະເຈົ້າໄດ້ຈັດຕຽມເພື່ອການກໍ່ສ້າງໄວ້ສຳເລັດແລ້ວ [3]ແຕ່ ພຣະເຈົ້າ ກ່າວ
ກັບຂ້າພະເຈົ້າວ່າ ‘ເຈົ້າຢ່າສ້າງວິຫານເພື່ອນາມຂອງເຮົາເລີຍ ເພາະເຈົ້າເປັນນັກຮົບ ແລະໄດ້
ເຮັດໃຫ້ເລືອດໄຫລອອກ’ [4]ເຖິງປານນັ້ນກໍຕາມ ພຣະຜູ້ເປັນເຈົ້າ ພຣະເຈົ້າ ແຫ່ງ ອິສຣາເອນ ໄດ້
ເລືອກຂ້າພະເຈົ້າ ຈາກຄອບຄົວບັນພະບູລຸດ ຂອງ ຂ້າພະເຈົ້າທັງ ໝົດ ໃຫ້ ເປັນກະສັດປົກຄອງ ອິ-
ສຣາເອນ ສືບໆໄປເປັນນິດ ເພາະພຣະອົງໄດ້ເລືອກ ຢູດາ ໃຫ້ເປັນຫົວໜ້າ ແລະໃນເຊື້ອສາຍ
ຂອງ ຢູດາ, ຄອບຄົວບັນພະບູລຸດຂອງຂ້າພະເຈົ້າ ແລະໃນບັນດາລູກຊາຍຂອງພໍ່ຂ້າພະເຈົ້າ

ພຣະອົງໄດ້ພໍພຣະໄທໃນ ຂ້າພະເຈົ້າ ແລະໄດ້ໃຫ້ຂ້າພະເຈົ້າເປັນກະສັດປົກຄອງອິສຣາເອນທັງ
ປວງ [5]ແລະພຣະຜູ້ເປັນເຈົ້າໄດ້ປະທານລູກຊາຍເປັນຈຳນວນຫລາຍແກ່ຂ້າພະເຈົ້າ ພຣະອົງໄດ້
ເລືອກ ໂຊໂລໂມນ ລູກຊາຍຂອງຂ້າພະເຈົ້າໃຫ້ນັ່ງບັນລັງແຫ່ງລາຊະອານາຈັກຂອງ ພຣະຜູ້ເປັນ-
ເຈົ້າປົກຄອງຊາວອິສຣາເອນ [6]ພຣະອົງກ່າວກັບຂ້າພະເຈົ້າວ່າ 'ໂຊໂລໂມນລູກຊາຍຂອງເຈົ້າຈະ
ກໍ່ສ້າງວິຫານຂອງເຮົາ ແລະເດີ່ນລານວິຫານຂອງເຮົາ ເພາະເຮົາໄດ້ເລືອກລາວໃຫ້ເປັນລູກຂອງ
ເຮົາ ແລະເຮົາຈະເປັນພໍ່ຂອງລາວ [7]ເຮົາຈະສະຖາປະນາລາຊະອານາຈັກຂອງລາວ ເຮົາຈະຕັ້ງ
ໃຫ້ໝັ້ນຄົງຢູ່ສືບໆໄປເປັນນິດ ຖ້າລາວຈະຕັ້ງໝັ້ນຄົງຢູ່ໃນການປະຕິບັດຕາມຄຳສັ່ງ ແລະພຣະ-
ບັນຍັດທັງຫລາຍຂອງເຮົາຄືກັບທີ່ລາວໄດ້ເຮັດຢູ່ໃນມື້ນີ້' [8]ເພາະສະນັ້ນ ບັດນີ້ໃນສາຍຕາຂອງ
ບັນດາຊາວອິສຣາເອນທັງປວງທີ່ເປັນຊຸມນຸມຊົນຂອງ ພຣະຜູ້ເປັນເຈົ້າ ແລະຕໍ່ພຣະກັນຂອງ
ພຣະເຈົ້າຂອງເຮົາທ່ານທັງຫລາຍຈົ່ງປະພຶດຕາມ ແລະຊອກຫາພຣະບັນຍັດທັງໝົດຂອງ ພຣະ-
ຜູ້ເປັນເຈົ້າ ພຣະເຈົ້າຂອງພວກເຈົ້າ ເພື່ອເຈົ້າຈະໄດ້ແຜ່ນດິນອັນດີນີ້ເປັນກຳມະສິດ ແລະມອບ
ໄວ້ໃຫ້ເປັນມໍລະດົກຂອງລູກຫລານຜູ້ມາພາຍຫລັງ ເຈົ້າສືບໆໄປເປັນນິດ

[9]ໂຊໂລໂມນລູກຂອງເຮົາເອີຍ ເຈົ້າຈົ່ງຮູ້ຈັກພຣະເຈົ້າຂອງພໍ່ເຈົ້າ ແລະຈົ່ງບົວລະບັດພຣະອົງ
ດ້ວຍໃຈຈິງ ແລະດ້ວຍຄວາມເຕັມໃຈຂອງເຈົ້າ ເພາະພຣະຜູ້ເປັນເຈົ້າໄດ້ພິຈາລະນາຈິດໃຈທັງ
ປວງ ແລະໄດ້ເຂົ້າໃຈໃນແຜນງານແຫ່ງຄວາມຄິດທັງປວງຖ້າເຈົ້າຊອກຫາພຣະອົງ ເຈົ້າຈະພົບ
ພຣະອົງ ແຕ່ຖ້າເຈົ້າປະຖິ້ມພຣະອົງ ພຣະອົງຈະໄດ້ຖິ້ມເຈົ້າອອກໄປເປັນນິດ [10]ບັດນີ້ ຈົ່ງຟັງໃຫ້
ດີ ເພາະວ່າພຣະຜູ້ເປັນເຈົ້າໄດ້ເລືອກເຈົ້າໃຫ້ກໍ່ສ້າງພຣະວິຫານເພື່ອເປັນສະຖານທີ່ບໍລິສຸດ ຈົ່ງ
ເຂັ້ມແຂງ ແລະເຮັດໃຫ້ສຳເລັດເຖີດ"

## ດາວິດມອບແຜນຜັງຂອງພຣະວິຫານໃຫ້ກັບໂຊໂລໂມນ

[11]ແລ້ວ ດາວິດ ໄດ້ມອບແຜນຜັງໃຫ້ກັບ ໂຊໂລໂມນ ລູກຊາຍຂອງພະອົງ ຊຶ່ງແຜນຜັງທໍປະຕູ
ຂອງພຣະວິຫານ ແລະແຜນຜັງຫ້ອງຕ່າງໆຂອງພຣະວິຫານນັ້ນ ຄັງແລະຫ້ອງຊັ້ນເທິງ ແລະ
ບັນດາຫ້ອງຊັ້ນໃນ ກັບຫ້ອງສຳລັບບ່ອນນັ່ງແຫ່ງພຣະຄຸນ [12]ທຸກໆແຜນຜັງທີ່ກະສັດໄດ້ຮັບດ້ວຍ
ພຣະວິນຍານ ວ່າດ້ວຍເດີ່ນຂອງພຣະວິຫານຂອງພຣະຜູ້ເປັນເຈົ້າ ແລະບັນດາຫ້ອງລະບຽງ
ອ້ອມຮອບ ແລະຄັງສຳລັບພຣະວິຫານຂອງພຣະເຈົ້າ ແລະຄັງສຳລັບບັນດາເຄື່ອງຖວາຍ

[13]ແລະແຜນຜັງສຳລັບຜະແໜກບັນດາປະໂລຫິດກັບຄົນເລວີ ແລະງານບົວລະບັດທັງໝົດໃນ
ພຣະວິຫານຂອງພຣະຜູ້ເປັນເຈົ້າ ແລະສຳລັບບັນດາເຄື່ອງຮັບໃຊ້ໃນວຽກງານບົວລະບັດໃນ
ພຣະວິຫານຂອງພຣະຜູ້ເປັນເຈົ້າ

[14]ພະອົງໄດ້ສັ່ງນ້ຳໜັກທອງຄຳຂອງເຄື່ອງໃຊ້ທອງຄຳທຸກຢ່າງທີ່ໃຊ້ໃນການບົວລະບັດແຕ່ລະ
ຢ່າງ ແລະຕິດສັ່ງນ້ຳໜັກເງິນສຳລັບເຄື່ອງໃຊ້ເງິນທຸກຢ່າງໃນວຽກງານບົວລະບັດແຕ່ລະຢ່າງ
[15]ສັ່ງນ້ຳໜັກເຄື່ອງຮອງຕະກຽງທອງຄຳ ແລະຕະກຽງທອງຄຳ, ນ້ຳໜັກຂອງເຄື່ອງຮອງຕະກຽງ
ແຕ່ລະອັນກັບຕະກຽງແຕ່ລະຫນ່ວຍ; ນ້ຳໜັກເງິນຂອງຄັນຕະກຽງ ທັງຄັນຕະກຽງກັບຕະກຽງ
ນັ້ນ ຕາມທີ່ຈະໃຊ້ຄັນຕະກຽງແຕ່ລະອັນ [16]ສັ່ງນ້ຳໜັກທອງຄຳສຳລັບໂຕະເຂົ້າຈີ່ຕໍ່ໜ້າພຣະພັກ
ແຕ່ລະໜ່ວຍ, ເງິນສຳລັບໂຕະເງິນ [17]ແລະຂໍເກາະຊີ້ນ ຖ້ວຍ ແລະຈອກເປັນທອງຄຳບໍລິສຸດ

ຊາມທອງຄຳ ກັບນ້ຳໜັກທອງຄຳຂອງແຕ່ລະໜ່ວຍ ຊາມເງິນ ແລະນ້ຳໜັກເງິນຂອງແຕ່ລະ
ໜ່ວຍ 18ແທ່ນເຄື່ອງຫອມເຮັດດ້ວຍທອງຄຳເນື້ອລະອຽດ ແລະນ້ຳໜັກຂອງແທ່ນນັ້ນທັງແຜນ-
ຜັງສຳລັບລົດຮົບ ທອງຄຳຂອງເຄຣຸບ ຊຶ່ງກາງປີກອອກປົກຫີບພຣະສັນຍາຂອງ ພຣະຜູ້ເປັນເຈົ້າ
19ດາວິດກ່າວວ່າ "ສິ່ງທັງປວງເຫລົ່ານີ້ພຣະຜູ້ເປັນເຈົ້າໄດ້ເຮັດໃຫ້ຂ້າພະເຈົ້າເຂົ້າໃຈໂດຍອາໄສ
ລາຍພຣະຫັດ ຂອງພຣະອົງຢູ່ເທິງຂ້າພະເຈົ້າ ຊຶ່ງການງານທຸກຢ່າງຈະຕ້ອງເຮັດຕາມແຜນຜັງນັ້ນ"

## ດາວິດໄດ້ໜູນໃຈໂຊໂລໂມນໃນການສ້າງພຣະວິຫານ

20ແລ້ວ ດາວິດ ກ່າວກັບ ໂຊໂລໂມນ ລູກຊາຍຂອງຕົນວ່າ "ຈົ່ງເຂັ້ມແຂງ ແລະກ້າຫານ ແລະ
ເຮັດໃຫ້ສຳເລັດສາ ຢ່າຢ້ານເລີຍ ເພາະວ່າພຣະຜູ້ເປັນເຈົ້າຄືພຣະເຈົ້າຂອງເຮົາໄດ້ສະຖິດຢູ່ກັບ
ເຈົ້າ ພຣະອົງຈະບໍ່ປ່ອຍໃຫ້ເຈົ້າລົ້ມເຫລວ ຫລືປະຖິ້ມເຈົ້າຈົນກວ່າວຽກງານກໍ່ສ້າງທັງໝົດແຫ່ງ
ພຣະວິຫານຂອງ ພຣະຜູ້ເປັນເຈົ້າ ຈະສຳເລັດ 21ເບິ່ງແມ ມີໜ່ວຍງານຂອງພວກປະໂລຫິດ ແລະ
ຄົນ ເລວີ ຈະຢູ່ກັບເຈົ້າໃນການບົວລະບັດທຸກຢ່າງແຫ່ງພຣະວິຫານ ຂອງ ພຣະເຈົ້າ ແລະຄົນ
ທັງຫລາຍທີ່ມີນ້ຳໃຈຮັບຜິດຊອບແລະມີຄວາມຊຳນານໃນວຽກງານນີ້ກໍຈະມີຢູ່ກັບເຈົ້າ ກັບພວກ
ຫົວໜ້າ ແລະປະຊາຊົນທັງປວງທັງປວງກໍຈະຢູ່ພາຍໃຕ້ຄຳບັນຊາຂອງເຈົ້າ"

# ບົດທີ 29

## ດາວິດໄດ້ເລົ້າໂລມໃຈປະຊາຊົນ

1ແລ້ວກະສັດ ດາວິດ ກ່າວກັບພວກຊຸມນຸມຊົນທັງໝົດວ່າ "ໂຊໂລໂມນ ລູກຊາຍຂອງເຮົາ ຊຶ່ງ
ເປັນຜູ້ດຽວທີ່ ພຣະເຈົ້າ ໄດ້ເລືອກໄວ້ນັ້ນກໍຍັງເປັນຄົນໜຸ່ມຢູ່, ຍັງບໍ່ທັນມີຄວາມຊຳນານ ແຕ່ການ
ງານກໍໃຫຍ່ໂຕຫລາຍ ເພາະວ່າມະຫາວິຫານນັ້ນ ບໍ່ແມ່ນສຳລັບມະນຸດແຕ່ສຳລັບ ພຣະຜູ້ເປັນ-
ເຈົ້າ 2ເພາະສະນັ້ນ ເຮົາຈຶ່ງຈັດຕຽມໄວ້ສຳລັບພຣະວິຫານຂອງ ພຣະເຈົ້າ ຂອງ ເຮົາດ້ວຍເຕັມ
ຄວາມສາມາດຂອງເຮົາ ຄືທອງຄຳສຳລັບສິ່ງທີ່ເຮັດດ້ວຍທອງຄຳ ແລະເງິນສຳລັບສິ່ງທີ່ເຮັດ
ດ້ວຍເງິນ ແລະທອງເຫລືອງສຳລັບສິ່ງທີ່ເຮັດດ້ວຍທອງເຫລືອງ ແລະເຫລັກສຳລັບສິ່ງທີ່ເຮັດ
ດ້ວຍເຫລັກ ແລະໄມ້ສຳລັບສິ່ງທີ່ເຮັດດ້ວຍໄມ້ ຫີນແກ້ວໂມລາ ແລະພອຍສຳລັບຝັງທີ່ຈະບັນຈຸ
ເຂົ້າກັບຫີນແກ້ວເຫລືອມໃສ, ກັບຫີນແກ້ວສີຕ່າງໆທຸກຢ່າງ ເພັດພອຍທຸກຊະນິດ ແລະຫີນ
ອ່ອນຢ່າງຫລວງຫລາຍ 3ຫລາຍໄປກວ່ານັ້ນອີກ ນອກຈາກສິ່ງທັງປວງທີ່ເຮົາໄດ້ຈັດຫາໄວ້ສຳ-
ລັບວິຫານບໍລິສຸດແລ້ວ ເຮົາໄດ້ຖວາຍ ທອງຄຳ ແລະເງິນເປັນສົມບັດຂອງເຮົາເອງ ເພາະ
ຄວາມຮັກຂອງເຮົາທີ່ມີຕໍ່ພຣະວິຫານຂອງ ພຣະເຈົ້າ ຂອງເຮົາ ເຮົາມອບໃຫ້ແດ່ພຣະວິຫານແຫ່ງ
ພຣະເຈົ້າຂອງເຮົາ 4ມີຄືດັ່ງນີ້ ທອງຄຳສາມພັນຕະລັນຕົນເປັນທອງຄຳເມືອງໂອຟີ ແລະເງິນບໍ-
ລິສຸດທີ່ຫລອມແລ້ວເຈັດພັນຕະລັນຕົນ ເພື່ອຈະຕົບແຕ່ງຝາພຣະວິຫານ 5ທອງຄຳສຳລັບສິ່ງທີ່
ເຮັດດ້ວຍທອງຄຳ ແລະເງິນສຳລັບສິ່ງທີ່ເຮັດດ້ວຍເງິນ ແລະສຳລັບວຽກງານທັງໝົດທີ່ຊ່າງຈະ
ຕ້ອງເຮັດດ້ວຍມື ໃນມື້ນີ້ມີໃຜແດ່ທີ່ຈະເຕັມໃຈຖວາຍສິ່ງຂອງພ້ອມກັບຖວາຍຕົວແດ່ພຣະຜູ້ເປັນ-
ເຈົ້າ"

6ແລ້ວເຈົ້ານາຍຂອງບັນພະບູລຸດ ບັນດາຫົວໜ້າຂອງຕະກູນແຫ່ງອິສຣາເອນ ທັງນາຍພັນ

ນາຍຮ້ອຍ ແລະພະນັກງານເບິ່ງແຍງລາຊະການກໍໄດ້ເອົາສິ່ງຂອງມາຖວາຍດ້ວຍຄວາມເຕັມໃຈ
7ພວກເຂົາຖວາຍເພື່ອງານບົວລະບັດແຫ່ງພຣະວິຫານຂອງພຣະເຈົ້າ ເປັນທອງຄຳຫ້າພັນຕະ-
ລັນຕົນ ແລະໜຶ່ງໝື່ນດາຣິກ ເງິນໜຶ່ງໝື່ນຕະລັນຕົນ ທອງເຫລືອງໜຶ່ງໝື່ນແປດພັນຕະລັນຕົນ
ແລະເຫລັກໜຶ່ງແສນຕະລັນຕົນ 8ຜູ້ໃດທີ່ມີເພັດພອຍກໍຖວາຍໄວ້ທີ່ຄັງພຣະວິຫານຂອງພຣະຜູ້-
ເປັນເຈົ້າ ໃນຄວາມເບິ່ງແຍງຂອງເຢຮີເອນຄົນເກໂຊນ 9ແລ້ວປະຊາຊົນກໍຊົມຊື່ນຍິນດີທີ່ພວກ
ເຂົາໄດ້ຖວາຍສິ່ງເຫລົ່ານີ້ຕາມຄວາມສະມັກໃຈຂອງພວກເຂົາ ແລະພວກເຂົາຖວາຍດ້ວຍຄວາມ
ຈິງໃຈ ດ້ວຍຄວາມເຕັມໃຈແດ່ພຣະຜູ້ເປັນເຈົ້າ ກະສັດດາວິດກໍໄດ້ຊື່ນຊົມຍິນດີຢ່າງໃຫຍ່ຫລວງ
ໃນການນັ້ນ

## ດາວິດອະທິຖານ ແລະໂມທະນາພຣະຄຸນພຣະຜູ້ເປັນເຈົ້າ

10ດັ່ງນັ້ນ ດາວິດໄດ້ສັນລະເສີນພຣະຜູ້ເປັນເຈົ້າຕໍ່ໜ້າຊຸມນຸມຊົນທັງປວງ ແລະດາວິດທູນ
ວ່າ “ຂ້າແດ່ພຣະຜູ້ເປັນເຈົ້າ ພຣະເຈົ້າແຫ່ງອິສຣາເອນ ບັນພະບູລຸດຂອງຂ້າພະອົງທັງຫລາຍ
ສາທຸການແດ່ພຣະອົງສືບໆເປັນນິດ 11ຂ້າແດ່ພຣະຜູ້ເປັນເຈົ້າຄວາມຍິ່ງໃຫຍ່, ລິດທານຸພາບ,
ສະຫງ່າລາສີ, ໄຊຊະນະ ແລະຄວາມອຸດົມສົມບູນເປັນຂອງພຣະອົງ ແລະບັນດາສິ່ງທີ່ມີຢູ່ໃນ
ຟ້າສະຫວັນ ແລະໃນແຜ່ນດິນໂລກເປັນຂອງພຣະອົງ; ຂ້າແດ່ພຣະຜູ້ເປັນເຈົ້າລາຊະອານາຈັກ
ເປັນຂອງພຣະອົງ ແລະພຣະອົງໄດ້ເປັນທີ່ຍົກຍ້ອງສັນລະເສີນ, ເປັນຈອມລາຊາຂອງສິ່ງສາ-
ລະພັດ 12ທັງຄວາມຮັ່ງມີ ແລະກຽດຕິຍົດມາຈາກພຣະອົງ ແລະພຣະອົງໄດ້ຄອບຄອງຢູ່ເໜືອ
ທຸກສິ່ງ ລິດທານຸພາບ ແລະ ລິດອຳນາດທີ່ຍິ່ງໃຫຍ່ຢູ່ໃນພຣະຫັດຂອງພຣະອົງ ແລະພຣະຫັດ
ຂອງພຣະອົງມີອຳນາດທີ່ຈະເຮັດໃຫ້ທຸກໆສິ່ງຈະເລີນຂຶ້ນ ແລະຕັ້ງໝັ້ນຄົງຢູ່ 13ບັດນີ້ ຂ້າພະອົງ
ທັງຫລາຍໂມທະນາພຣະຄຸນພຣະອົງຜູ້ເປັນພຣະເຈົ້າຂອງຂ້າພະອົງ ແລະສັນລະເສີນພຣະນາມ
ອັນຮຸ່ງເຮືອງຂອງພຣະອົງ

14ແຕ່ຂ້າພະອົງເປັນຜູ້ໃດ ແລະຊົນຊາດຂອງຂ້າພະອົງເປັນຜູ້ໃດ ທີ່ຂ້າພະອົງທັງຫລາຍຈະ
ສາມາດຖວາຍແດ່ພຣະອົງ ດ້ວຍຄວາມເຕັມໃຈເຊັ່ນນີ້ ເພາະວ່າສິ່ງຂອງທຸກຢ່າງມາຈາກພຣະ-
ອົງ ແລະສິ່ງຂອງທີ່ອອກມາຈາກພຣະຫັດຂອງພຣະອົງ ພວກຂ້າພະອົງທັງຫລາຍໄດ້ນຳມາ
ຖວາຍແດ່ພຣະອົງເທົ່ານັ້ນ 15ເພາະວ່າຂ້າພະອົງທັງຫລາຍເປັນຄົນຕ່າງດ້າວທ້າວຕ່າງແດນຕໍ່
ພຣະພັກພຣະອົງ ແລະເປັນຄົນອາໄສຢູ່ຊົ່ວຄາວດັ່ງທີ່ບັນພະບູລຸດຂອງຂ້າພະອົງໄດ້ເປັນຢ່າງນັ້ນ
ມາແລ້ວ ວັນເດືອນປີຂອງພວກຂ້າພະອົງເທິງແຜ່ນດິນໂລກເປັນເໝືອນເງົາ ແລະບໍ່ມີຄວາມ
ໝັ້ນຄົງແນ່ນອນ 16ຂ້າແດ່ພຣະຜູ້ເປັນເຈົ້າ ພຣະເຈົ້າຂອງຂ້າພະອົງທັງຫລາຍ, ວັດຖຸທີ່ຫລວງ-
ຫລາຍເຫລົ່ານີ້ທັງໝົດຊຶ່ງຂ້າພະອົງໄດ້ຈັດຫາເພື່ອກໍ່ສ້າງພຣະວິຫານຖວາຍແດ່ພຣະອົງ ເພື່ອ
ພຣະນາມອັນບໍລິສຸດຂອງພຣະອົງ ທຸກຢ່າງກໍມາຈາກພຣະຫັດຂອງພຣະອົງ ແລະເປັນຂອງ
ພຣະອົງທັງໝົດ 17ຂ້າແດ່ພຣະເຈົ້າຂອງຂ້າພະອົງ ຂ້າພະອົງຮູ້ແນ່ວ່າ ພຣະອົງໄດ້ທົດລອງເບິ່ງ
ຈິດໃຈ ແລະໄດ້ພໍພຣະໄທໃນຄວາມ ທ່ຽງທຳ ສ່ວນຂ້າພະອົງໄດ້ຖວາຍທຸກສິ່ງເຫລົ່ານີ້ທັງໝົດ
ດ້ວຍຄວາມເຕັມໃຈໃນຄວາມສັດຊື່ແຫ່ງຈິດໃຈຂອງຂ້າພະອົງ ແລະບັດນີ້ຂ້າພະອົງຊື່ນໃຈຍິນດີທີ່
ໄດ້ເຫັນປະຊາຊົນຂອງພຣະອົງຜູ້ຊຶ່ງຢູ່ທີ່ນີ້ໄດ້ເຕັມໃຈຖວາຍແດ່ພຣະອົງ 18ຂ້າແດ່ພຣະຜູ້ເປັນ-

ເຈົ້າ ພຣະເຈົ້າ ຂອງ ອັບຣາຮາມ ອີຊາກ ແລະ ອິສຣາເອນ ບັນພະບູລຸດຂອງຂ້າພະອົງທັງຫລາຍ
ຂໍພຣະອົງໄດ້ຮັກສາຄວາມປະສົງ ແລະຄວາມຄິດໃນໃຈຂອງປະຊາຊົນຂອງພຣະອົງໃຫ້ເປັນ
ເຊັ່ນນີ້ສະເໝີໄປແລະຂໍໄດ້ຕັ້ງຈິດໃຈຂອງພວກເຂົາໃຫ້ໝັ້ນຄົງໃນພຣະອົງ [19]ຂໍພຣະອົງໄດ້ໂຜດ
ໂຊໂລໂມນ ລູກຊາຍຂອງຂ້າພະອົງໃຫ້ມີຈິດໃຈສັດຊື່ທີ່ຈະຮັກສາບັນດາພຣະບັນຍັດຂອງພຣະອົງ
ພຣະໂອວາດຂອງພຣະອົງ ແລະກົດເກນຂອງພຣະອົງ ແລະໃຫ້ເຮັດທຸກຢ່າງເຫລົ່ານີ້ ທັງກໍ່ສ້າງ
ພຣະວິຫານຕາມທີ່ຂ້າພະອົງໄດ້ກະກຽມໄວ້ແລ້ວນັ້ນ”

## ປະຊາຊົນຕັ້ງໂຊໂລໂມນໃຫ້ເປັນກະສັດ

[20]ແລ້ວ ດາວິດກ່າວກັບຊຸມນຸມຊົນທັງປວງວ່າ “ຈົ່ງຖວາຍສາທຸການແດ່ພຣະຜູ້ເປັນເຈົ້າພຣະ-
ເຈົ້າຂອງທ່ານທັງຫລາຍ” ແລະຊຸມນຸມຊົນທັງປວງກໍສັນລະເສີນ ພຣະຜູ້ເປັນເຈົ້າພຣະເຈົ້າ ແຫ່ງ
ບັນພະບູລຸດຂອງພວກເຂົາ ແລະກົ້ມຫົວຂອງພວກເຂົາລົງນະມັດສະການ ພຣະຜູ້ເປັນເຈົ້າ ແລະ
ຖວາຍກຽດແດ່ກະສັດ

[21]ໃນເຊົ້າມື້ຕໍ່ມາ ພວກເຂົາໄດ້ຖວາຍສັດບູຊາແດ່ພຣະຜູ້ເປັນເຈົ້າ ແລະຖວາຍເຄື່ອງເຜົາບູ-
ຊາແດ່ພຣະຜູ້ເປັນເຈົ້າ ເປັນງົວເຖິກໜຶ່ງພັນໂຕ, ແກະຜູ້ໜຶ່ງພັນໂຕ, ລູກແກະໜຶ່ງພັນໂຕພ້ອມ
ກັບ ເຄື່ອງດື່ມບູຊາ ແລະຖວາຍສັດບູຊາຢ່າງຫລວງຫລາຍ ເພື່ອຊາວ ອິສຣາເອນ ທັງປວງ
[22]ພວກເຂົາໄດ້ກິນໄດ້ດື່ມຕໍ່ພຣະພັກ ພຣະຜູ້ເປັນເຈົ້າ ໃນມື້ນັ້ນດ້ວຍຄວາມຍິນດີຫລາຍ ແລະພວກ
ເຂົາໄດ້ຕັ້ງ ໂຊໂລໂມນ ລູກຊາຍຂອງ ດາວິດ ເປັນກະສັດເປັນເທື່ອທີ່ສອງ ແລະພວກເຂົາໄດ້ເຈີມ
ພະອົງໄວ້ໃຫ້ເປັນເຈົ້ານາຍສຳລັບ ພຣະຜູ້ເປັນເຈົ້າ ແລະເຈີມ ຊາໂດກ ໃຫ້ເປັນປະໂລຫິດ
[23]ແລ້ວ ໂຊໂລໂມນ ໄດ້ປະທັບ ເທິງພະທີ່ນັ່ງຂອງ ພຣະຜູ້ເປັນເຈົ້າ ເປັນກະສັດແທນ ດາວິດ ພໍ່ຂອງ
ຕົນ ແລະພະອົງໄດ້ຈະເລີນຂຶ້ນ ອິສຣາເອນທັງປວງກໍເຊື່ອຟັງພະອົງ [24]ບັນດາເຈົ້ານາຍທັງປວງ
ແລະທະຫານທີ່ເກັ່ງກ້າທັງຫລາຍ ພ້ອມທັງບັນດາລູກຊາຍຂອງກະສັດ ດາວິດ ໄດ້ປະຕິຍານຕົວຕໍ່
ກະສັດ ໂຊໂລໂມນ [25]ພຣະຜູ້ເປັນເຈົ້າໄດ້ປະທານຊື່ສຽງທີ່ຍິ່ງໃຫຍ່ແກ່ໂຊໂລໂມນ ເປັນພິເສດໃນ
ສາຍຕາຂອງ ອິສຣາເອນ ທັງປວງ ແລະໄດ້ປະທານຄວາມອຸດົມຮັ່ງມີຂອງກະສັດໃຫ້ແກ່ພະອົງ
ຢ່າງທີ່ບໍ່ມີກະສັດອົງໃດໃນ ອິສຣາເອນທີ່ຢູ່ກ່ອນພະອົງໄດ້ຮັບ

## ການສະຫລຸບລາຊະການ ແລະການສິ້ນພະຊົນຂອງດາວິດ[ກ]

[26]ຝ່າຍ ດາວິດ ລູກຊາຍ ເຢຊີ ໄດ້ປົກຄອງ ອິສຣາເອນທັງປວງ [27]ເວລາທີ່ພະອົງໄດ້ປົກຄອງ ອິ-
ສຣາເອນ ນັ້ນເປັນເວລາສີ່ສິບປີ ພະອົງໄດ້ປົກຄອງໃນ ເຮັບໂຣນ ເຈັດປີ ແລະໄດ້ ປົກຄອງໃນ
ເຢຣູຊາເລັມ ສາມສິບສາມປີ [28]ແລ້ວພະອົງໄດ້ຕາຍເມື່ອເຖົ້າແກ່ຫລາຍແລ້ວ ທັງໄດ້ຮັ່ງມີ ແລະມີ
ກຽດ ໂຊໂລໂມນລູກຊາຍຂອງພະອົງໄດ້ປົກ ຄອງແທນພະອົງ [29]ສ່ວນພະລາດຊະກິດຂອງກະ-
ສັດ ດາວິດ ຕັ້ງແຕ່ຕົ້ນຈົນສຸດທ້າຍ; ເບິ່ງແມ ໄດ້ບັນທຶກໄວ້ໃນໜັງສືຂອງຊາມູເອນ ຜູ້ທຳ-
ນວາຍ ແລະໃນໜັງສືຂອງ ນາທານ ຜູ້ທຳນວາຍ ແລະໃນໜັງສືຂອງ ຄາດ ຜູ້ທຳນວາຍ [30]ມີ
ເລື່ອງລາວການປົກຄອງຂອງເພິ່ນທັງໝົດ ແລະອຳນາດຂອງເພິ່ນ ເລື່ອງລາວທີ່ບັງເກີດຂຶ້ນກັບ
ເພິ່ນ ແລະອິສຣາເອນ ທັງບັນດາລາຊະອານາຈັກທັງໝົດຂອງປະເທດຕ່າງໆ

[ກ]1 ຂ່າວຄາວ 2:11-12

# ຂ່າວຄາວ ສະບັບທີສອງ

## ບົດທີ 1

### ກະສັດໂຊໂລໂມນຖວາຍເຄື່ອງບູຊາທີ່ກິເບໂອນ[ກ]

1ໂຊໂລໂມນ ລູກຊາຍຂອງ ດາວິດ ໄດ້ສະຖາປະນາລາຊະອານາຈັກຂອງພະອົງ ແລະ ພຣະຜູ້-
ເປັນເຈົ້າ ພຣະເຈົ້າ ຂອງພະອົງຊົງສະຖິດຢູ່ກັບພະອົງ ແລະຊົງເຮັດໃຫ້ພະອົງຍິ່ງໃຫຍ່

2ໂຊໂລໂມນ ກ່າວກັບ ອິສຣາເອນ ທັງປວງ ກັບນາຍພັນແລະນາຍຮ້ອຍ ທັງກັບຜູ້ພິຈາລະນາ
ແລະກັບເຈົ້ານາຍທັງປວງໃນ ອິສຣາເອນ ທັງໝົດ ຜູ້ເປັນຫົວໜ້າຂອງບັນພະບູລຸດຂອງພວກເຂົາ
3ແລະ ໂຊໂລໂມນ ກັບຊຸມນຸມຊົນທັງປວງທີ່ຢູ່ກັບພະອົງ ໄດ້ຂຶ້ນໄປທີ່ປູຊະນີຍະສະຖານສູງຊຶ່ງຢູ່ທີ່
ກິເບໂອນ ເພາະຫໍເຕັນແຫ່ງຊຸມນຸມຂອງ ພຣະເຈົ້າ ຊຶ່ງ ໂມເຊ ຜູ້ຮັບໃຊ້ຂອງ ພຣະຜູ້ເປັນເຈົ້າ ໄດ້
ສ້າງຂຶ້ນໃນຖິ່ນແຫ້ງແລ້ງກັນດານ ຢູ່ບ່ອນນັ້ນ 4ແຕ່ ດາວິດ ໄດ້ນຳຫີບຂອງ ພຣະເຈົ້າ ຂຶ້ນມາຈາກ
ກີຣິຢາດ-ເຢອາຣີມ ເຖິງສະຖານທີ່ຊຶ່ງ ດາວິດ ໄດ້ຊົງຕຽມໄວ້ໃຫ້ ເພາະພະອົງໄດ້ຊົງຕັ້ງເຕັນໄວ້ໃຫ້
ໃນ ເມືອງ ເຢຣູຊາເລັມ 5ຫລາຍກວ່ານັ້ນ ແທ່ນບູຊາທອງເຫລືອງຊຶ່ງ ເບຊາເລນ ລູກຊາຍ ອູຣີ ຜູ້
ເປັນລູກຊາຍ ຮູເຣ ໄດ້ສ້າງໄວ້ນັ້ນ ກໍຢູ່ຕໍ່ໜ້າຫໍເຕັນຂອງ ພຣະຜູ້ເປັນເຈົ້າ ແລະ ໂຊໂລໂມນ ກັບຊຸມ-
ນຸມຊົນກໍໄດ້ສະແຫວງຫາ ພຣະເຈົ້າ 6ແລະ ໂຊໂລໂມນ ສະເດັດຂຶ້ນໄປບ່ອນນັ້ນຄືແທ່ນບູຊາທອງ-
ເຫລືອງຕໍ່ພຣະພັກ ພຣະຜູ້ເປັນເຈົ້າ ຊຶ່ງຢູ່ທີ່ຫໍເຕັນແຫ່ງຊຸມນຸມ ແລະຊົງຖວາຍເຄື່ອງເຜົາບູຊາໜຶ່ງ
ພັນໂຕເທິງແທ່ນນັ້ນ

### ໂຊໂລໂມນທູນຂໍສະຕິປັນຍາ[ຂ]

7ໃນຄືນນັ້ນ ພຣະເຈົ້າ ຊົງປະກົດແກ່ ໂຊໂລໂມນ ແລະກ່າວກັບພະອົງວ່າ “ເຈົ້າຢາກໃຫ້ເຮົາໃຫ້
ອັນໃດແກ່ເຈົ້າ ກໍຈົ່ງຂໍສາ” 8ແລ້ວ ໂຊໂລໂມນ ທູນ ພຣະເຈົ້າ ວ່າ “ພຣະອົງໄດ້ຊົງສະແດງຄວາມ
ຮັກອັນໝັ້ນຄົງ ແລະຄວາມເມດຕາອັນຍິ່ງໃຫຍ່ແກ່ ດາວິດ ພໍ່ຂອງຂ້າພະອົງ ແລະຊົງໃຫ້ຂ້າພະ-
ອົງປົກຄອງແທນ 9ຂ້າແດ່ ພຣະຜູ້ເປັນເຈົ້າ ຂໍໃຫ້ພຣະສັນຍາຂອງພຣະອົງທີ່ມີຕໍ່ ດາວິດ ພໍ່ຂອງ
ຂ້າພະອົງເປັນຈິງ ໃນບັດນີ້ ເພາະພຣະອົງໄດ້ຊົງຕັ້ງໃຫ້ຂ້າພະອົງເປັນກະສັດເໜືອຊົນຊາດທີ່ມີ
ຫລາຍຄືຂີ້ຝຸ່ນດິນແຫ່ງແຜ່ນດິນໂລກ 10ຂໍຊົງປະທານສະຕິປັນຍາ ແລະຄວາມຮູ້ແກ່ຂ້າພະອົງທີ່
ຈະເຂົ້ານອກອອກໃນຕໍ່ໜ້າຊົນຊາດນີ້ ເພາະມີຜູ້ໃດບໍ່ທີ່ຈະພິຈາລະນາປະຊາຊົນຂອງພຣະອົງອັນ
ຫລວງຫລາຍນັ້ນໄດ້”

11ພຣະເຈົ້າ ກ່າວຕອບ ໂຊໂລໂມນ ວ່າ “ເພາະວ່າສິ່ງນີ້ຢູ່ໃນຈິດໃຈຂອງເຈົ້າ ແລະເຈົ້າບໍ່ໄດ້ຂໍ
ຊັບສົມບັດຄວາມຮັ່ງມີ ແລະກຽດ ຫລືຊີວິດຂອງຄົນເຫລົ່ານັ້ນທີ່ກຽດຊັງເຈົ້າ ແລະບໍ່ໄດ້ຂໍຊີວິດ
ໃຫ້ຍືນຍາວ ແຕ່ໄດ້ຂໍສະຕິປັນຍາແລະຄວາມຮູ້ເພື່ອຕົວເຈົ້າເອງ ເພື່ອເຈົ້າຈະພິຈາລະນາປະຊາ-
ຊົນຂອງເຮົາ ຜູ້ຊຶ່ງເຮົາໄດ້ຕັ້ງເຈົ້າໃຫ້ເປັນກະສັດເໜືອພວກເຂົານັ້ນ 12ເຮົາປະທານສະຕິປັນຍາ
ແລະຄວາມຮູ້ໃຫ້ແກ່ເຈົ້າ ເຮົາຈະໃຫ້ຊັບສົມບັດ ຄວາມຮັ່ງມີ ແລະກຽດແກ່ເຈົ້າຢ່າງທີ່ບໍ່ມີກະສັດ

[ກ]1 ປະຫວັດກະສັດ 3:4 [ຂ]1 ປະຫວັດກະສັດ 3:5-15

ອົງໃດຜູ້ຢູ່ກ່ອນເຈົ້າໄດ້ມີ ແລະບໍ່ມີຜູ້ໃດພາຍຫລັງເຈົ້າຈະມີຄືກັບເຈົ້າອີກ”

13ໂຊໂລໂມນ ຈຶ່ງສະເດັດຈາກບ່ອນນະມັດສະການທີ່ ກິເບໂອນ ຈາກຕໍ່ໜ້າຫໍເຕັນແຫ່ງຊຸມນຸມ
ໄປເມືອງ ເຢຣູຊາເລັມ ແລະພະອົງຊົງປົກຄອງຢູ່ເໜືອ ອິສຣາເອນ

14ໂຊໂລໂມນ ຊົງສະສົມລົດຮົບ ແລະພົນທະຫານມ້າ ພະອົງຊົງມີລົດຮົບໜຶ່ງພັນສີ່ຮ້ອຍຄັນ
ແລະພົນທະຫານມ້າໜຶ່ງໝື່ນສອງພັນຄົນ ຊຶ່ງພະອົງຊົງໃຫ້ປະຈຳຢູ່ທີ່ຫົວເມືອງລົດຮົບ ແລະຢູ່
ກັບກະສັດໃນເມືອງ ເຢຣູຊາເລັມ 15ກະສັດຊົງເຮັດໃຫ້ເງິນ ແລະຄຳເປັນຂອງສາມັນໃນເມືອງ
ເຢຣູຊາເລັມ ເໝືອນກ້ອນຫີນ ແລະຊົງເຮັດໃຫ້ມີໄມ້ສົນຫລວງຫລາຍ ເໝືອນໄມ້ໝາກເດື່ອຂອງ
ຮ່ອມພູເຂົາ 16ມ້າອັນເປັນສິນຄ້າຂາເຂົ້າຂອງ ໂຊໂລໂມນ ມາຈາກ ເອຢິບ ເປັນຝູງໆ ແລະບັນດາ
ພໍ່ຄ້າຂອງກະສັດຮັບມາເປັນຝູງໆຕາມລາຄາ 17ພວກເຂົາທັງຫລາຍນຳລົດຮົບເຂົ້າມາຈາກ ເອ-
ຢິບ ຄັນໜຶ່ງເປັນເງິນຫົກຮ້ອຍເຊເຂເງິນ ແລະມ້າໂຕໜຶ່ງໜຶ່ງຮ້ອຍຫ້າສິບ ດັ່ງນັ້ນ ໂດຍທາງພວກ
ພໍ່ຄ້າ ພວກເຂົາກໍສົ່ງອອກໄປໃຫ້ບັນດາກະສັດຂອງຄົນຮິດຕີ ແລະບັນດາກະສັດຂອງຄົນຊີເຣຍ

# ບົດທີ 2

## ການຕຽມສ້າງພຣະວິຫານຂອງພຣະເຈົ້າ[ກ]

1ຝ່າຍ ໂຊໂລໂມນ ຊົງ ຕັ້ງ ພະ ໄທ ທີ່ ຈະ ສ້າງ ພຣະວິຫານ ເພື່ອ ພຣະນາມ ຂອງ ພຣະຜູ້ເປັນເຈົ້າ
ແລະສ້າງລາຊະວັງເພື່ອລາຊະອານາຈັກຂອງພະອົງ 2ແລະ ໂຊໂລໂມນ ຊົງກຳນົດໃຫ້ເຈັດໝື່ນຄົນ
ເປັນຄົນຂົນເຄື່ອງ ແລະໃຫ້ແປດໝື່ນຄົນສະກັດຫີນທີ່ເທິງພູເຂົາ ແລະໃຫ້ຄົນສາມພັນຫົກຮ້ອຍ
ຄົນເບິ່ງແຍງພວກເຂົາທັງຫລາຍ

3ໂຊໂລໂມນ ຊົງສົ່ງລາຊະສານໄປຫາ ຮູຣາມ ກະສັດເມືອງ ຕີເຣ ວ່າ “ທ່ານໄດ້ເຮັດທຸລະກິດ
ກັບ ດາວິດ ພໍ່ຂອງຂ້າພະເຈົ້າ ຄື ໄດ້ສົ່ງໄມ້ສົນໃຫ້ພະອົງ ເພື່ອສ້າງວັງໃຫ້ພະອົງ ທ່ານສັນຍາ
ຢ່າງໃດ ຂໍທ່ານໄດ້ເຮັດແກ່ຂ້າພະເຈົ້າຢ່າງນັ້ນດ້ວຍ 4ເບິ່ງແມ ຂ້າພະເຈົ້າກຳລັງຈະສ້າງພຣະວິ-
ຫານເພື່ອພຣະນາມ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງຂ້າພະເຈົ້າ ແລະມອບຖວາຍແກ່ພະອົງ ເພື່ອ
ເຜົາເຄື່ອງຫອມຕໍ່ພຣະພັກພຣະອົງ ແລະເພື່ອເຂົ້າຈີ່ຕັ້ງຖວາຍຕະຫລອດໄປເປັນນິດ ແລະເພື່ອ
ເຄື່ອງເຜົາບູຊາທັງເຊົ້າ ແລະແລງ ໃນວັນສະບາໂຕ ແລະໃນວັນເດືອນອອກໃໝ່ ແລະວັນເທດ-
ສະການຕາມກຳນົດຂອງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງ ເຮົາ ຊຶ່ງ ເປັນກົດຕັ້ງໄວ້ຕະຫລອດໄປ
ເປັນນິດສຳລັບ ອິສຣາເອນ 5ພຣະວິຫານທີ່ຂ້າພະເຈົ້າຈະສ້າງນັ້ນໃຫຍ່ຫລວງ ເພາະວ່າ ພຣະເຈົ້າ
ຂອງ ເຮົາຍິ່ງໃຫຍ່ກວ່າພະທັງປວງ 6ແຕ່ຜູ້ໃດໜໍທີ່ຈະສາມາດສ້າງພຣະວິຫານສຳລັບພຣະອົງໄດ້
ໃນ ເມື່ອຟ້າສະຫວັນທີ່ສູງທີ່ສຸດຮັບຮອງພຣະອົງໄວ້ກໍບໍ່ໄດ້ ຂ້າພະເຈົ້າເປັນຜູ້ໃດໜໍທີ່ຈະສ້າງ
ພຣະວິຫານສຳລັບພຣະອົງ ນອກຈາກໃຫ້ເປັນບ່ອນເຜົາເຄື່ອງບູຊາຕໍ່ພຣະພັກພຣະອົງເທົ່ານັ້ນ

7ເພາະສະນັ້ນ ບັດນີ້ຂໍສົ່ງຊາຍຄົນໜຶ່ງຜູ້ຊຳນານການຊ່າງຄຳ ເງິນ ທອງເຫລືອງ ແລະ
ເຫລັກ ແລະຊຳນານໃນເລື່ອງຜ້າສີມ່ວງ ສີແດງເຂັ້ມ ແລະສີຟ້າ ທັງເປັນຜູ້ຊຳນານໃນການ
ແກະສະຫລັກ ເພື່ອຈະຢູ່ກັບຊ່າງຝີມືຜູ້ຢູ່ກັບຂ້າພະເຈົ້າໃນຢູດາ ແລະໃນ ເຢຣູຊາເລັມ ຜູ້ທີ່ດາ-

[ກ]1 ປະຫວັດກະສັດ 5:1-18

ວິດ ພໍ່ຂອງຂ້າພະເຈົ້າໄດ້ຈັດຫາໄວ້ [8]ຂໍທ່ານສົ່ງໄມ້ສົນ ໄມ້ແປກ ແລະໄມ້ດູ່ຈາກ ເລບານອນ ໃຫ້
ຂ້າພະເຈົ້າດ້ວຍ ເພາະຂ້າພະເຈົ້າຮູ້ວ່າ ຂ້າລາຊະການຂອງທ່ານຮູ້ຈັກການຕັດໄມ້ໃນ ເລບານອນ
ແລະເບິ່ງແມ ຂ້າລາຊະການຂອງຂ້າພະເຈົ້າຈະຢູ່ກັບຂ້າລາຊະການຂອງທ່ານ [9]ເພື່ອຈັດຕຽມໄມ້
ໃຫ້ແກ່ຂ້າພະເຈົ້າໃຫ້ໄດ້ຫລວງຫລາຍ ເພາະວ່າພຣະວິຫານທີ່ຂ້າພະເຈົ້າຈະສ້າງນີ້ຈະໃຫຍ່ແລະ
ແປກປະຫລາດຫລາຍ [10]ແລະເບິ່ງແມ ສ່ວນຂ້າລາຊະການຂອງທ່ານ ຄືຜູ້ທີ່ຕັດໄມ້ນັ້ນ ຂ້າພະ-
ເຈົ້າຈະໃຫ້ເຂົ້າສາລີນວດແລ້ວສອງໝື່ນໂຄລະ ເຂົ້າບາເລສອງໝື່ນໂຄລະ (ສອງພັນໂຕນ) ນໍ້າ
ອະງຸ່ນສອງໝື່ນບັດ ແລະນໍ້າມັນສອງໝື່ນບັດ (ສີ່ແສນລິດ) ແກ່ພວກເຂົາທັງຫລາຍ”

[11]ແລ້ວ ຮູຣາມ ກະສັດ ແຫ່ງ ເມືອງ ຕີເຣ ຊົງຕອບ ເປັນລາຍພະຫັດ ຊຶ່ງພະອົງຊົງມີໄປເຖິງ ໂຊ-
ໂລໂມນ ວ່າ, “ເພາະວ່າ ພຣະຜູ້ເປັນເຈົ້າ ຊົງຮັກປະຊາຊົນຂອງພຣະອົງ ພຣະອົງຈຶ່ງຊົງ ເຮັດໃຫ້
ທ່ານເປັນກະສັດເໜືອພວກເຂົາທັງຫລາຍ” [12]ຮູຣາມ ກ່າວອີກວ່າ “ສາທຸການແດ່ ພຣະຜູ້ເປັນເຈົ້າ
ພຣະເຈົ້າ ແຫ່ງ ອິສຣາເອນ ຜູ້ຊົງສ້າງຟ້າສະຫວັນ ແລະ ແຜ່ນດິນໂລກ ຜູ້ໄດ້ປະທານລູກຊາຍ
ທີ່ສະຫລາດຄົນໜຶ່ງ ແກ່ ດາວິດ ປະກອບດ້ວຍຄວາມສະຫລຽວສະຫລາດ ແລະມີຄວາມເຂົ້າໃຈ
ຜູ້ຊຶ່ງ ຈະ ສ້າງ ພຣະວິຫານ ຖວາຍ ພຣະຜູ້ເປັນເຈົ້າ ແລະສ້າງ ພະລາຊະວັງ ເພື່ອລາຊະອານາຈັກ
ຂອງພະອົງ [13]ບັດນີ້ ຂ້າພະເຈົ້າໄດ້ສົ່ງຊ່າງຝີມືຄົນໜຶ່ງ ປະກອບດ້ວຍຄວາມເຂົ້າໃຈ ຄືຮູຣາມທີ່
ປຶກສາອາວຸໂສ [14]ລູກຊາຍຂອງຍິງຄົນ ດານ ພໍ່ຂອງລາວເປັນຊາວເມືອງ ຕີເຣ ລາວຊໍານານ
ງານຊ່າງຄໍາ ເງິນ ທອງເຫລືອງ ເຫລັກຫີນ ແລະໄມ້ ແລະເຮັດວຽກຊ່າງຜ້າສີມ່ວງ ສີຟ້າ ຜ້າ
ປ່ານເນື້ອລະອຽດ ແລະ ຜ້າສີແດງເຂັ້ມ ແລະແກະສະຫລັກທຸກຊະນິດ ແລະສ້າງຕາມແບບ
ລວດລາຍໃດໆທີ່ຈະກໍານົດໃຫ້ແກ່ລາວ ພ້ອມກັບຊ່າງຝີມືຂອງລາວ ຄືຊ່າງຝີມືຂອງ ດາວິດ ພໍ່
ຂອງພະອົງຜູ້ເປັນເຈົ້ານາຍຂອງຂ້າພະເຈົ້າ [15]ເພາະສະນັ້ນ ບັດນີ້ເລື່ອງເຂົ້າສາລີ ເຂົ້າບາເລ
ນໍ້າມັນ ແລະນໍ້າອະງຸ່ນ ທີ່ເຈົ້ານາຍຂອງຂ້າພະເຈົ້າໄດ້ກ່າວເຖິງນັ້ນ ຂໍພະອົງໄດ້ສົ່ງໄປໃຫ້ພວກ
ເຂົາຜູ້ຮັບໃຊ້ພະອົງສາ [16]ແລະພວກເຮົາຈະຕັດໄມ້ເທົ່າທີ່ພະອົງຕ້ອງການຈາກ ເລບານອນ ແລະ
ນໍາມາໃຫ້ພະອົງ ໂດຍແພທາງທະເລເຖິງ ເມືອງ ຢົບປາ ເພື່ອວ່າພະອົງຈະໄດ້ນໍາຂຶ້ນໄປໃນເມືອງ
ເຢຣູຊາເລັມ”

[17]ແລ້ວ ໂຊໂລໂມນ ຊົງເຮັດບັນຊີສໍາມະໂນຄົວຄົນຕ່າງດ້າວທັງໝົດຜູ້ຢູ່ໃນແຜ່ນດິນ ອິສຣາເອນ
ພາຍຫລັງ ບັນຊີສໍາມະໂນຄົວທີ່ ດາວິດ ພໍ່ຂອງພະອົງ ໄດ້ຊົງ ເຮັດໄວ້ ແລະປະກົດວ່າມີຄົນໜຶ່ງ
ແສນຫ້າໝື່ນສາມພັນຫົກຮ້ອຍຄົນ [18]ພຣະອົງຊົງກໍານົດໃຫ້ເຈັດໝື່ນຄົນເປັນຄົນຂົນເຄື່ອງ ແລະ
ໃຫ້ແປດໝື່ນຄົນສະກັດຫີນຢູ່ເທິງພູເຂົາ ແລະຄົນສາມພັນຫົກຮ້ອຍຄົນເປັນຜູ້ເບິ່ງແຍງໃຫ້ປະຊາ-
ຊົນເຮັດວຽກ

# ບົດທີ 3

## ການເລີ່ມສ້າງພຣະວິຫານເທິງພູເຂົາໂມຣີຢາ

[1]ແລ້ວ ໂຊໂລໂມນ ຊົງ ເລີ່ມສ້າງພຣະວິຫານຂອງ ພຣະຜູ້ເປັນເຈົ້າ ທີ່ ເມືອງ ເຢຣູຊາເລັມ ເທິງພູ-
ເຂົາ ໂມຣີຢາ ຊຶ່ງເປັນບ່ອນທີ່ ພຣະຜູ້ເປັນເຈົ້າ ຊົງປະກົດແກ່ ດາວິດ ພໍ່ຂອງພະອົງ ບ່ອນທີ່ ດາວິດ

ຊົງກຳນົດໄວ້ທີ່ເດີ່ນນວດເຂົ້າຂອງອາໂຣນາ ຄົນເຢບຸດ [2]ພະອົງຊົງເລີ່ມສ້າງໃນວັນທີສອງ
ເດືອນທີສອງຂອງປີທີສີ່ແຫ່ງລາຊະການຂອງພະອົງ

### ຂະໜາດ ແລະວັດຖຸແຫ່ງພຣະວິຫານ[ກ]

[3]ຕໍ່ໄປນີ້ເປັນຮາກຖານທີ່ໂຊໂລໂມນຊົງວາງເພື່ອສ້າງພຣະວິຫານຂອງພຣະເຈົ້າ ລວງຍາວ
ຕາມສອກບູຮານ ຫົກສິບສອກ ແລະກວ້າງຊາວສອກ [4]ລະບຽງດ້ານໜ້າຂອງພຣະວິຫານນັ້ນ
ຍາວຊາວສອກ ເທົ່າກັບລວງກວ້າງຂອງພຣະວິຫານ ແລະລວງສູງໜຶ່ງຮ້ອຍຊາວ ພະອົງຊົງ
ໂອບດ້ານໃນດ້ວຍຄຳບໍລິສຸດ [5]ຫ້ອງໂຖງ ພະອົງຊົງໂອບດ້ວຍໄມ້ແປກ ແລະໂອບດ້ວຍຄຳສົດ
ແລະເຮັດຕົ້ນຕານ ແລະລູກໂສ້ປະດັບໄວ້ເທິງນັ້ນ [6]ພະອົງຊົງແຕ່ງພຣະວິຫານດ້ວຍການຝັງເພັດ
ພອຍຕ່າງໆເພື່ອຄວາມສວຍງາມ ຄຳນັ້ນເປັນຄຳເມືອງປາວາອີມ [7]ພະອົງຈຶ່ງຊົງໂອບພຣະວິ-
ຫານນັ້ນດ້ວຍຄຳຄືຢູ່ຄານ ທາງເຂົ້າປະຕູ ຝາ ປະຕູ ກັບສະຫລັກຮູບເຄຣຸບໄວ້ເທິງຝາ

[8]ແລະພະອົງຊົງສ້າງບ່ອນບໍລິສຸດທີ່ສຸດ ຄືຄວາມຍາວຂອງບ່ອນນັ້ນຕາມຄວາມກວ້າງຂອງ
ພຣະວິຫານເປັນຊາວສອກ ແລະກວ້າງຊາວສອກ ພຣະອົງຊົງໂອບດ້ວຍຄຳເນື້ອດີໜັກຫົກຮ້ອຍ
ຕະລັນຕົນ [9]ນ້ຳໜັກຂອງຕະປູຫ້າສິບເຊເຂນຄຳ ແລະພະອົງຊົງໂອບຫ້ອງຊັ້ນເທິງດ້ວຍຄຳ
[10]ໃນບ່ອນບໍລິສຸດທີ່ສຸດນັ້ນ ພະອົງຊົງສ້າງເຄຣຸບໄວ້ສອງຮູບດ້ວຍໄມ້ໂອບຄຳ [11]ປີກຂອງເຄຣຸບ
ທັງສອງນັ້ນກາງອອກຊາວສອກ ປີກຂ້າງໜຶ່ງຂອງເຄຣຸບຮູບໜຶ່ງຍາວຫ້າສອກຈຸຝາພຣະວິຫານ
ແລະອີກປີກໜຶ່ງຍາວຫ້າສອກຈຸປີກຂອງເຄຣຸບອີກຮູບໜຶ່ງ [12]ແລະປີກອີກຂ້າງໜຶ່ງຂອງເຄຣຸບ
ຍາວຫ້າສອກຈຸຝາພຣະວິຫານ ແລະອີກປີກໜຶ່ງຫ້າສອກຕິດຕໍ່ກັບປີກຂອງເຄຣຸບອີກຮູບໜຶ່ງ
[13]ປີກຂອງເຄຣຸບເຫລົ່ານີ້ກາງອອກຊາວສອກ ເຄຣຸບທັງສອງນັ້ນຢືນຫັນໜ້າໄປທາງຫ້ອງໂຖງ
[14]ແລະພະອົງຊົງສ້າງຜ້າກັ້ງ ດ້ວຍຜ້າສີຟ້າ ສີມ່ວງ ແລະສີແດງເຂັ້ມ ແລະຜ້າປ່ານເນື້ອລະອຽດ
ແລະປັກຮູບເຄຣຸບໄວ້ເທິງນັ້ນ

[15]ຂ້າງໜ້າພຣະວິຫານ ພະອົງຊົງສ້າງເສົາສອງຕົ້ນ ສູງສາມສິບຫ້າສອກ ມີບົວລົ້ນສູງຫ້າ
ສອກຢູ່ເທິງປາຍເສົາແຕ່ລະຕົ້ນ [16]ພະອົງຊົງເຮັດລູກໂສ້ຄືໃນຫ້ອງຫລັງຕິດໄວ້ທີ່ປາຍເສົາ ແລະ
ຊົງເຮັດທັບທິມໜຶ່ງຮ້ອຍໜ່ວຍແຂວນໄວ້ທີ່ໂສ້ [17]ພະອົງຊົງຕັ້ງເສົາໄວ້ໜ້າພຣະວິຫານ ເບື້ອງ
ຂວາຕົ້ນໜຶ່ງ ອີກຕົ້ນໜຶ່ງເບື້ອງຊ້າຍ ຕົ້ນເບື້ອງຂວານັ້ນ ພະອົງຊົງຕັ້ງຊື່ວ່າ ຢາກີນ ແລະຕົ້ນ
ເບື້ອງຊ້າຍວ່າ ໂບອາດ

# ບົດທີ 4

## ເຄື່ອງຕິດຕັ້ງສຳລັບພຣະວິຫານ

[1]ພະອົງຊົງສ້າງແທ່ນບູຊາດ້ວຍທອງເຫລືອງ ຍາວຊາວສອກ ກວ້າງຊາວສອກ ແລະສູງສິບ
ສອກ [2]ແລ້ວພະອົງຊົງສ້າງຂັນຫລໍ່ ເປັນຂັນມົນ ວັດແທກຈາກຂອບໜຶ່ງໄປເຖິງອີກຂອບໜຶ່ງໄດ້
ສິບສອກ ສູງຫ້າສອກ ແລະວັດແທກໂດຍຮອບໄດ້ສາມສິບສອກ [3]ພາຍໃຕ້ຂັນນີ້ມີຮູບງົວຢູ່ຮອບ
ຂັນ ໃນໄລຍະໜຶ່ງສອກມີຮູບງົວສິບສອງໂຕ ຢູ່ຮອບຂັນ ງົວເຫລົ່ານີ້ເປັນສອງແຖວ ຫລໍ່ພ້ອມ

[ກ]1 ປະຫວັດກະສັດ 6:27-51

ກັນກັບຫລໍ່ຂັນ [4]ຂັນນັ້ນວາງຢູ່ເທິງງົວສິບສອງໂຕຫັນໜ້າໄປທິດເໜືອສາມໂຕ ຫັນໜ້າໄປທິດ-
ຕາເວັນຕົກສາມໂຕ ຫັນໜ້າໄປທິດໃຕ້ສາມໂຕ ແລະຫັນໜ້າໄປທິດຕາເວັນອອກສາມໂຕ ຂັນ
ນັ້ນວາງຢູ່ເທິງງົວນີ້ ສ່ວນເບື້ອງຫລັງຂອງມັນທັງໝົດຢູ່ຂ້າງໃນ [5]ຂັນໜາໜຶ່ງຄືບ ຂອບຂອງມັນ
ເຮັດຄືຂອບຖ້ວຍ ຄືດອກບົວ ບັນຈຸໄດ້ສາມພັນບັດ (ຫົກພັນລິດ) [6]ພະອົງຊົງເຮັດຂັນສິບໜ່ວຍ
ວາງຢູ່ດ້ານຂວາຫ້າໜ່ວຍ ດ້ານຊ້າຍຫ້າໜ່ວຍ ເພື່ອໃຊ້ລ້າງສິ່ງຂອງໃນນັ້ນ ເຂົາຈະລ້າງຂອງທີ່
ໃຊ້ເປັນເຄື່ອງເຜົາບູຊາໃນນີ້ ຂັນນັ້ນສຳລັບໃຫ້ປະໂລຫິດລ້າງໃນນັ້ນ

[7]ແລ້ວພະອົງຊົງສ້າງຄັນຕະກຽງຄຳສິບຄັນຕາມທີ່ກຳນົດກ່ຽວກັບຄັນຕະກຽງ ແລະພະອົງຊົງ
ຕັ້ງໄວ້ໃນພຣະວິຫານ ຢູ່ດ້ານຂວາຫ້າອັນ ແລະດ້ານຊ້າຍຫ້າອັນ [8]ພະອົງຊົງສ້າງໂຕະສິບໜ່ວຍ
ແລະຕັ້ງໄວ້ໃນພຣະວິຫານ ຢູ່ດ້ານຂວາຫ້າໜ່ວຍ ດ້ານຊ້າຍຫ້າໜ່ວຍ ແລະພະອົງຊົງເຮັດຖ້ວຍ
ຄຳໜຶ່ງຮ້ອຍໜ່ວຍ [9]ພະອົງຊົງສ້າງລານແຫ່ງປະໂລຫິດ ແລະລານໃຫຍ່ ແລະປະຕູລານ ແລະ
ຊົງໂອບປະຕູນັ້ນດ້ວຍທອງເຫລືອງ [10]ແລະພະອົງຊົງວາງຂັນໄວ້ທີ່ດ້ານຂວາພຣະວິຫານທາງ
ທິດຕາເວັນອອກສຽງໃຕ້

[11]ຮູຣາມໄດ້ສ້າງໝໍ້ດິນ ຊວ້ານ ແລະຖ້ວຍດັ່ງນັ້ນຮູຣາມຈຶ່ງເຮັດວຽກໃຫ້ກະສັດໂຊໂລໂມນ
ເລື່ອງພຣະວິຫານຂອງພຣະເຈົ້າສຳເລັດ [12]ຄື ເສົາສອງຕົ້ນ ຄິ້ວ ແລະບົວລົ້ມທີ່ຢູ່ເທິງປາຍເສົາ
ທັງສອງ ແລະຕາໜ່າງສອງຜືນຊຶ່ງປົກຄຸມຄິ້ວທັງສອງຂອງບົວລົ້ມທີ່ຢູ່ເທິງປາຍເສົາ [13]ແລະທັບ-
ທິມສີ່ຮ້ອຍເມັດສຳລັບຕາໜ່າງທັງສອງຜືນ ຕາໜ່າງຜືນໜຶ່ງມີເມັດທັບທິມສອງແຖວ ເພື່ອປົກຄຸມ
ຄິ້ວທັງສອງຂອງບົວລົ້ມທີ່ຢູ່ເທິງປາຍເສົາ [14]ພວກເຂົາເຮັດແທ່ນບູຊາ ແລະເຮັດຂັນໄວ້ເທິງແທ່ນ
ບູຊານັ້ນ [15]ຂັນໜ່ວຍໜຶ່ງ ແລະງົວສິບສອງໂຕຮອງຢູ່ຂັນນັ້ນ [16]ໝໍ້ດິນ ຊວ້ານ ແລະຂໍເກາະຊີ້ນ
ແລະເຄື່ອງປະກອບທັງໝົດນີ້ ຮູຣາມທີ່ປຶກສາອາວຸໂສໄດ້ເຮັດຂຶ້ນດ້ວຍທອງເຫລືອງສຸກຖວາຍ
ກະສັດໂຊໂລໂມນສຳລັບພຣະວິຫານຂອງພຣະຜູ້ເປັນເຈົ້າ [17]ກະສັດຊົງຫລໍ່ສິ່ງເຫລົ່ານີ້ໃນທົ່ງ
ຮາບພຽງແມ່ນ້ຳຢໍແດນ ໃນບ່ອນດິນໜຽວຢູ່ລະຫວ່າງສຸກໂກດກັບເຊເຣດາ [18]ໂຊໂລໂມນຊົງ
ສ້າງເຄື່ອງໃຊ້ທັງໝົດນີ້ເປັນຈຳນວນຫລາຍ ຈຶ່ງບໍ່ໄດ້ຫານ້ຳໜັກຂອງທອງເຫລືອງ

[19]ແລະໂຊໂລໂມນຈຶ່ງຊົງເຮັດເຄື່ອງໃຊ້ທັງໝົດທີ່ຢູ່ໃນພຣະວິຫານຂອງພຣະເຈົ້າ ຄືແທ່ນບູຊາ
ຄຳ ໂຕະເຂົ້າຈີ່ຕໍ່ໜ້າພຣະພັກ [20]ຄັນຕະກຽງ ແລະຕະກຽງເຮັດດ້ວຍຄຳບໍລິສຸດ ເພື່ອໃຊ້ຕາມ
ຕະກຽງໜ້າຫ້ອງ ຫລັງຫ້ອງຕາມກົດ [21]ດອກໄມ້ ຕະກຽງ ແລະມີດຕັດ ຕັດໄສ້ຕະກຽງ ເຮັດ
ດ້ວຍຄຳ ຄືຄຳບໍລິສຸດທີ່ສຸດ [22]ມີດຕັດ ຕັດໄສ້ຕະກຽງ ຖ້ວຍ ຊ້ອນ ແລະກະຖັງໄຟ ເຮັດດ້ວຍ
ຄຳບໍລິສຸດ ສ່ວນທາງເຂົ້າຂອງພຣະວິຫານຄື ປະຕູຊັ້ນໃນຂອງບ່ອນບໍລິສຸດທີ່ສຸດ ແລະປະຕູ
ພຣະວິຫານຄືປະຕູຫ້ອງໂຖງເຮັດດ້ວຍຄຳ

# ບົດທີ 5

## ການນຳຫີບແຫ່ງພຣະເຈົ້າເຂົ້າໄປໃນພຣະວິຫານ[ກ]

[1]ບັນດາກິດຈະການທີ່ໂຊໂລໂມນຊົງກະທຳສຳລັບພຣະວິຫານຂອງພຣະຜູ້ເປັນເຈົ້າກໍສຳເລັດ

[ກ]1 ປະຫວັດກະສັດ 8:1-11

ດັ່ງນີ້ ແລະ ໂຊໂລໂມນ ຊົງນຳບັນດາສິ່ງທີ່ ດາວິດ ຜູ້ເປັນບິດາຊົງຖວາຍໄວ້ເຂົ້າມາ ຄືເຄື່ອງເງິນ
ເຄື່ອງຄຳ ແລະເຄື່ອງໃຊ້ຕ່າງໆ ແລະເກັບໄວ້ໃນຄັງພຣະວິຫານຂອງ ພຣະເຈົ້າ

[2]ແລ້ວ ໂຊໂລໂມນ ຊົງປະຊຸມພວກຜູ້ໃຫຍ່ຂອງ ອິສຣາເອນ ແລະບັນດາຫົວໜ້າຂອງຕະກູນ
ແລະບັນດາຫົວໜ້າຂອງບັນພະບູລຸດຄົນ ອິສຣາເອນ ໃນເມືອງ ເຢຣູຊາເລັມ ເພື່ອຈະນຳຫີບຄຳ-
ໝັ້ນສັນຍາຂອງ ພຣະຜູ້ເປັນເຈົ້າ ຂຶ້ນມາຈາກນະຄອນ ດາວິດ ຄືເມືອງ ຊີໂອນ [3]ແລະຜູ້ຊາຍທັງ
ໝົດຂອງ ອິສຣາເອນ ກໍປະຊຸມຕໍ່ພຣະພັກກະສັດ ໃນການກິນລ້ຽງໃນເດືອນທີເຈັດ [4]ພວກຜູ້ໃຫຍ່
ທັງໝົດຂອງ ອິສຣາເອນ ກໍມາ ແລະຄົນ ເລວີ ກໍຍົກຫີບ [5]ພວກເຂົາທັງຫລາຍກໍນຳຫີບ ຫໍເຕັນ
ແຫ່ງຊຸມນຸມ ແລະເຄື່ອງໃຊ້ບໍລິສຸດທັງໝົດທີ່ຢູ່ໃນຫໍເຕັນຂຶ້ນມາ ເຄື່ອງເຫລົ່ານີ້ບັນດາປະໂລຫິດ
ແລະຄົນ ເລວີ ຫາມຂຶ້ນມາ [6]ແລະກະສັດ ໂຊໂລໂມນ ກັບຊຸມນຸມຊົນ ອິສຣາເອນ ທັງໝົດທີ່ໄດ້ປະ-
ຊຸມກັນຢູ່ກັບພະອົງຕໍ່ໜ້າຫີບ ໄດ້ຖວາຍແກະ ແລະງົວຫລາຍໂຕ ຊຶ່ງພວກເຂົາຈະນັບເອົາຈຳ-
ນວນກໍບໍ່ໄດ້

[7]ແລ້ວປະໂລຫິດກໍນຳຫີບ ຄຳໝັ້ນສັນຍາຂອງ ພຣະຜູ້ເປັນເຈົ້າ ມາ ເຖິງບ່ອນຂອງຫີບ ຢູ່ໃນ
ຫ້ອງຫລັງຂອງພຣະວິຫານຄືໃນບ່ອນບໍລິສຸດທີ່ສຸດ ພາຍໃຕ້ປີກເຄຣຸບ [8]ເພາະວ່າເຄຣຸບນັ້ນກາງ
ປີກອອກຢູ່ ເທິງ ຫລັງ ຂອງ ຫີບ ເຄຣຸບ ຈຶ່ງ ເປັນ ເຄື່ອງ ປົກຄຸມ ເໜືອ ຫີບ ແລະ ໄມ້ຄານ ຂອງ ຫີບ
[9]ພວກເຂົາດຶງໄມ້ຄານຫາມຂອງຫີບນັ້ນອອກນຳ ຈຶ່ງເຫັນປາຍໄມ້ຄານຫາມໄດ້ຈາກຫີບນັ້ນ ຊຶ່ງຢູ່
ຕໍ່ໜ້າຫ້ອງຫລັງ ແຕ່ພວກເຂົາຈະເຫັນຈາກຂ້າງນອກບໍ່ໄດ້ ແລະໄມ້ຄານຫາມກໍຍັງຢູ່ບ່ອນນັ້ນ
ຈົນທຸກມື້ນີ້ [10]ບໍ່ມີສິ່ງໃດໃນຫີບນອກຈາກສີລາສອງແຜ່ນທີ່ ໂມເຊ ເກັບໄວ້ໃນພູເຂົາ ໂຮເຣັບ ຕອນ
ທີ່ ພຣະຜູ້ເປັນເຈົ້າ ຊົງ ເຮັດຄຳໝັ້ນສັນຍາກັບຄົນ ອິສຣາເອນ ເມື່ອພວກ ເຂົາທັງຫລາຍອອກມາ
ຈາກ ເອຢິບ

[11]ແລະຢູ່ມາ ເມື່ອປະໂລຫິດອອກມາຈາກບ່ອນບໍລິສຸດ (ເພາະປະໂລຫິດທັງປວງຜູ້ຢູ່ບ່ອນນັ້ນ
ໄດ້ຊຳລະຕົນໃຫ້ບໍລິສຸດແລ້ວ ແລະບໍ່ວ່າຈະຢູ່ໃນໝວດໃດກໍຕາມ [12]ບັນດາພວກ ເລວີ ທີ່ເປັນນັກ
ຮ້ອງທັງໝົດ ທັງ ອາສັບ ເຮມານ ແລະ ເຢດູທູນ ທັງລູກຊາຍ ແລະພີ່ນ້ອງຂອງພວກເຂົາທັງ-
ຫລາຍ ແຕ່ງກາຍດ້ວຍຜ້າປ່ານສີຂາວ ມີແຊ່ງ ພິນໃຫຍ່ ແລະພິນຄູ່ຢືນຢູ່ທາງຕາເວັນອອກຂອງ
ແທ່ນບູຊາ ພ້ອມກັບປະໂລຫິດເປົ່າແກໜຶ່ງຮ້ອຍຊາວຄົນ) [13]ຢູ່ມາພວກຄົນເປົ່າແກ ແລະພວກ
ນັກຮ້ອງ ຈະ ເຮັດ ໃຫ້ຄົນ ໄດ້ຍິນ ພວກ ເຂົາທັງຫລາຍ ຮ້ອງເພງ ສັນລະເສີນ ແລະ ເພງ ໂມທະນາ
ພຣະຄຸນ ພຣະຜູ້ເປັນເຈົ້າ ເປັນສຽງດຽວກັນ ແລະ ເມື່ອພວກເຂົາຮ້ອງຂຶ້ນພ້ອມກັບແກ ແລະແຊ່ງ
ກັບເຄື່ອງດົນຕີຊະນິດອື່ນໆ ໃນການຖວາຍສັນລະເສີນແກ່ ພຣະຜູ້ເປັນເຈົ້າ ວ່າ “ເພາະພຣະອົງ
ປະເສີດ ເພາະຄວາມ ເມດຕາຂອງພຣະອົງດຳລົງຢູ່ ເປັນນິດ” ພຣະວິຫານຄືພຣະວິຫານຂອງ
ພຣະຜູ້ເປັນເຈົ້າ ກໍມີເມກ ເຕັມ ໄປໝົດ [14]ຈົນ ປະໂລຫິດ ຢືນ ບົວລະບັດບໍ່ ໄດ້ ດ້ວຍ ເຫດ ເມກນັ້ນ
ເພາະສະຫງ່າລາສີຂອງ ພຣະຜູ້ເປັນເຈົ້າ ເຕັມພຣະວິຫານຂອງ ພຣະເຈົ້າ

# ບົດທີ 6

## ໂຊໂລໂມນຊົງກ່າວກັບຊຸມນຸມຊົນ[ກ]

[1]ແລ້ວ ໂຊໂລໂມນ ກ່າວວ່າ “ພຣະຜູ້ເປັນເຈົ້າ ໄດ້ກ່າວວ່າ ພຣະອົງຈະປະທັບໃນຄວາມມືດມິດ
[2]ຂ້າພະອົງ ໄດ້ສ້າງພຣະວິຫານອັນ ເປັນທີ່ປະທັບສຳລັບພຣະອົງ ເປັນສະຖານທີ່ ເພື່ອພຣະອົງຈະ
ຊົງສະຖິດຢູ່ເປັນນິດ” [3]ແລ້ວກະສັດກໍຊົງຫັນພະພັກມາ ແລະຊົງ ໃຫ້ພອນ ແກ່ຊຸມນຸມຊົນ ອິສຣາ-
ເອນ ທັງປວງ ຂະນະທີ່ຊຸມນຸມຊົນ ອິສຣາເອນ ທັງປວງຢືນຢູ່ [4]ພະອົງກ່າວວ່າ “ສາທຸການ ແດ່
ພຣະຜູ້ເປັນເຈົ້າ ພຣະເຈົ້າ ແຫ່ງ ອິສຣາເອນ ຜູ້ຊົງກະທຳໃຫ້ສຳເລັດ ດ້ວຍພຣະຫັດຂອງພຣະອົງ
ຕາມທີ່ພຣະອົງກ່າວ ໄວ້ດ້ວຍພຣະ ໂອດຕໍ່ ດາວິດ ພໍ່ຂອງຂ້າພະ ເຈົ້າວ່າ [5]‘ຕັ້ງ ແຕ່ມື້ທີ່ເຮົາ ໄດ້ນຳປະ-
ຊາຊົນຂອງ ເຮົາອອກຈາກແຜ່ນດິນ ເອຢິບ ເຮົາບໍ່ ໄດ້ເລືອກເມືອງໜຶ່ງ ເມືອງໃດໃນຕະກູນ ອິສຣາ-
ເອນ ທັງໝົດ ເພື່ອຈະສ້າງພຣະວິຫານ ໃຫ້ນາມຂອງ ເຮົາຈະຢູ່ບ່ອນນັ້ນ ແລະ ເຮົາບໍ່ ໄດ້ ເລືອກ
ຊາຍຄົນໃດ ໃຫ້ ເປັນ ເຈົ້ານາຍ ເໜືອ ອິສຣາເອນ ປະຊາຊົນຂອງ ເຮົາ [6]ແຕ່ ເຮົາ ໄດ້ ເລືອກ ເຢຣູຊາ-
ເລັມ ແລ້ວ ເພື່ອນາມຂອງ ເຮົາຈະຢູ່ບ່ອນນັ້ນ ແລະ ເຮົາ ໄດ້ ເລືອກ ດາວິດ ແລ້ວ ໃຫ້ຢູ່ ເໜືອ ອິສຣາ-
ເອນ ປະຊາຊົນຂອງ ເຮົາ’ [7]ດາວິດ ພໍ່ຂອງຂ້າພະ ເຈົ້າຊົງຕັ້ງພະ ໄທທີ່ຈະສ້າງພຣະວິຫານສຳລັບ
ພຣະນາມແຫ່ງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງ ອິສຣາເອນ [8]ແຕ່ ພຣະຜູ້ເປັນເຈົ້າ ກ່າວກັບ ດາວິດ
ພໍ່ຂອງຂ້າພະ ເຈົ້າວ່າ ‘ທີ່ ເຈົ້າຕັ້ງ ໃຈສ້າງພຣະວິຫານສຳລັບນາມຂອງ ເຮົານັ້ນ ເຈົ້າກໍເຮັດດີຢູ່ແລ້ວ
ໃນ ເລື່ອງຄວາມຕັ້ງ ໃຈຂອງ ເຈົ້າ [9]ຢ່າງໃດກໍຕາມ ເຈົ້າຈະບໍ່ສ້າງພຣະວິຫານ ແຕ່ລູກຊາຍຂອງ
ເຈົ້າຜູ້ຊຶ່ງ ຈະອອກມາຈາກບັ້ນແອວຂອງ ເຈົ້າຈະສ້າງພຣະວິຫານ ເພື່ອນາມຂອງ ເຮົາ’ [10]ບັດນີ້
ພຣະຜູ້ເປັນເຈົ້າ ຊົງ ໃຫ້ພຣະດຳລັດຂອງພຣະອົງຊຶ່ງພຣະອົງຊົງກ່າວນັ້ນສຳເລັດ ເພາະຂ້າພະ-
ເຈົ້າ ໄດ້ຂຶ້ນ ມາແທນ ດາວິດ ພໍ່ຂອງຂ້າພະ ເຈົ້າ ແລະນັ່ງຢູ່ ເທິງບັນລັງຂອງ ອິສຣາເອນ ດັ່ງທີ່
ພຣະຜູ້ເປັນເຈົ້າ ໄດ້ຊົງສັນຍາ ໄວ້ແລະຂ້າພະ ເຈົ້າ ໄດ້ສ້າງພຣະວິຫານສຳລັບພຣະນາມຂອງ ພຣະ-
ຜູ້ເປັນເຈົ້າ ພຣະເຈົ້າ ແຫ່ງ ອິສຣາເອນ [11]ແລະຂ້າພະ ເຈົ້າ ໄດ້ວາງຫີບ ໄວ້ບ່ອນນັ້ນ ແລະຄຳໝັ້ນ-
ສັນຍາຂອງ ພຣະຜູ້ເປັນເຈົ້າກໍຢູ່ໃນນັ້ນ ຊຶ່ງພຣະອົງ ໄດ້ຊົງ ໃຫ້ກັບຊົນຊາດ ອິສຣາເອນ”

## ການອະທິຖານອຸທິດຖວາຍພຣະວິຫານ[ຂ]

[12]ແລ້ວພະອົງປະທັບຢືນຢູ່ຕໍ່ໜ້າແທ່ນບູຊາຂອງ ພຣະຜູ້ເປັນເຈົ້າ ຕໍ່ໜ້າຊຸມນຸມຊົນ ອິສຣາເອນ
ທັງປວງ ແລະກາງພະຫັດ ຂອງພະ ອົງອອກ [13]ເພາະ ໂຊໂລໂມນ ໄດ້ຊົງສ້າງ ແທ່ນທອງ ເຫລືອງ
ຍາວຫ້າສອກ ກວ້າງຫ້າສອກ ສູງສາມສອກ ແລະຊົງຕັ້ງ ໄວ້ກາງ ເດີ່ນ ແລະພະອົງຊົງປະທັບຢູ່
ເທິງນັ້ນ ແລ້ວຊົງຄຸ ເຂົ່າລົງຕໍ່ໜ້າຊຸມນຸມ ອິສຣາເອນ ທັງປວງ ແລະກາງພະຫັດຂອງພະອົງສູ່ຟ້າ
ສະຫວັນ [14]ພະອົງທູນວ່າ “ຂ້າແດ່ ພຣະຜູ້ເປັນເຈົ້າ ພຣະເຈົ້າ ແຫ່ງ ອິສຣາເອນ ບໍ່ມີພຣະເຈົ້າອົງ
ໃດ ເໝືອນພຣະອົງ ໃນຟ້າສະຫວັນ ຫລືທີ່ແຜ່ນດິນ ໂລກ ຜູ້ຊົງຮັກສາຄຳໝັ້ນສັນຍາແລະຊົງສະ-
ແດງຄວາມ ເມດຕາ ແກ່ຜູ້ຮັບໃຊ້ຂອງພຣະອົງ ຜູ້ດຳເນີນຢູ່ຕໍ່ພຣະພັກພຣະອົງດ້ວຍສິ້ນສຸດໃຈຂອງ
ເຂົາ [15]ພຣະອົງ ໄດ້ຊົງກະທຳກັບ ດາວິດ ພໍ່ຂອງຂ້າພະອົງຜູ້ຮັບໃຊ້ຂອງພຣະອົງຕາມບັນດາສິ່ງ ທີ່
ພຣະອົງຊົງສັນຍາ ໄວ້ ແກ່ ເພິ່ນ ພຣະອົງກ່າວດ້ວຍພຣະ ໂອດຂອງພຣະອົງ ແລະພຣະອົງ ໄດ້ຊົງ

[ກ]1 ປະຫວັດກະສັດ 8:12-21 [ຂ]1 ປະຫວັດກະສັດ 8:22-53

ກະທຳໃຫ້ສຳເລັດໃນມື້ນີ້ດ້ວຍພຣະຫັດຂອງພຣະອົງ [16]ຂ້າແດ່ພຣະຜູ້ເປັນເຈົ້າ ພຣະເຈົ້າແຫ່ງ
ອິສຣາເອນ ເພາະສະນັ້ນ ບັດນີ້ຂໍຊົງດຳລົງຢູ່ກັບຜູ້ຮັບໃຊ້ຂອງພຣະອົງ ຄື ດາວິດພໍ່ຂອງຂ້າພະ-
ອົງ ຕາມທີ່ພຣະອົງຊົງສັນຍາໄວ້ກັບເພິ່ນວ່າ 'ຖ້າລູກຫລານທັງຫລາຍຂອງເຈົ້າ ລະມັດລະວັງ
ໃນການດຳເນີນຊີວິດຂອງພວກເຂົາ ໂດຍດຳເນີນຕາມພຣະບັນຍັດຂອງເຮົາ ຄືທີ່ເຈົ້າໄດ້ດຳເນີນ
ຕໍ່ໜ້າເຮົານັ້ນ ເຈົ້າຈະບໍ່ຂາດຊາຍຜູ້ໜຶ່ງໃນສາຍຕາຂອງເຮົາທີ່ຈະນັ່ງເທິງບັນລັງຂອງອິສຣາ-
ເອນ' [17]ເພາະສະນັ້ນ ຂ້າແດ່ພຣະຜູ້ເປັນເຈົ້າ ພຣະເຈົ້າແຫ່ງອິສຣາເອນ ຂໍພຣະທຳຂອງ
ພຣະອົງຈົ່ງດຳລົງຢູ່ ຊຶ່ງພຣະອົງໄດ້ກ່າວກັບດາວິດຜູ້ຮັບໃຊ້ຂອງພຣະອົງ

[18]ແຕ່ພຣະເຈົ້າຈະຊົງປະທັບກັບມະນຸດທີ່ແຜ່ນດິນໂລກຫລື ເບິ່ງແມ ຟ້າສະຫວັນ ແລະຟ້າ
ສະຫວັນອັນສູງທີ່ສຸດຍັງຮັບພຣະອົງຢູ່ບໍ່ໄດ້ ແລ້ວພຣະວິຫານທີ່ຂ້າພະອົງໄດ້ສ້າງຂຶ້ນຈະຮັບ
ພຣະອົງໄດ້ຢ່າງໃດ [19]ແຕ່ຂໍພຣະອົງຊົງສົນພຣະໄທໃນຄຳອະທິຖານຂອງຜູ້ຮັບໃຊ້ຂອງພຣະອົງ
ແລະໃນຄຳອ້ອນວອນນີ້ ຂ້າແດ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງຂ້າພະອົງ ຂໍຊົງຮັບຟັງສຽງຮ້ອງ
ແລະຄຳອະທິຖານທີ່ຜູ້ຮັບໃຊ້ຂອງພຣະອົງອະທິຖານຕໍ່ພຣະພັກພຣະອົງ [20]ເພື່ອວ່າພຣະເນດ
ຂອງພຣະອົງຈະຊົງຢູ່ເໜືອພຣະວິຫານນີ້ທັງກາງເວັນ ແລະກາງຄືນ ຄືສະຖານທີ່ຊຶ່ງພຣະອົງໄດ້
ກ່າວວ່າ ຈະຕັ້ງພະນາມຂອງພຣະອົງໄວ້ບ່ອນນັ້ນ ເພື່ອວ່າພຣະອົງຈະຊົງຮັບຟັງຄຳອະທິຖານທີ່
ຜູ້ຮັບໃຊ້ຂອງພຣະອົງໄດ້ອະທິຖານຢູ່ຕໍ່ໜ້າສະຖານທີ່ນີ້ [21]ແລະຂໍພຣະອົງຊົງຮັບຟັງຄຳອ້ອນ-
ວອນຂອງຜູ້ຮັບໃຊ້ຂອງພຣະອົງ ແລະຂອງອິສຣາເອນປະຊາຊົນຂອງພຣະອົງ ເມື່ອພວກເຂົາ
ອະທິຖານຢູ່ຕໍ່ໜ້າສະຖານທີ່ນີ້ ຂໍພຣະອົງຊົງຮັບຟັງຢູ່ໃນຟ້າສະຫວັນອັນເປັນບ່ອນປະທັບຂອງ
ພຣະອົງ ແລະເມື່ອພຣະອົງຊົງຮັບຟັງແລ້ວ ກໍຂໍພຣະອົງຊົງໂຜດຍົກໂທດ

[22]ເມື່ອຊາຍຄົນໃດເຮັດບາບຕໍ່ເພື່ອນບ້ານຂອງຕົນ ແລະຖືກບັງຄັບໃຫ້ສາບານ ແລ້ວລາວມາ
ໃຫ້ຄຳສາບານຕໍ່ໜ້າແທ່ນບູຊາຂອງພຣະອົງໃນພຣະວິຫານນີ້ [23]ຂໍພຣະອົງຊົງຮັບຟັງຈາກຟ້າ
ສະຫວັນ ແລະຂໍຊົງກະທຳ ຂໍຊົງພິພາກສາຜູ້ຮັບໃຊ້ທັງຫລາຍຂອງພຣະອົງ ລົງໂທດຜູ້ເຮັດ
ຄວາມຜິດ ແລະຊົງນຳຄວາມປະພຶດຂອງພວກເຂົາໃຫ້ຕົກເທິງຫົວຂອງຕົວເຂົາເອງ ແລະຂໍຊົງ
ປະກາດຄວາມບໍລິສຸດຂອງຜູ້ຊອບທຳ ສະໜອງແກ່ລາວຕາມຄວາມຊອບທຳຂອງລາວ

[24]ຖ້າອິສຣາເອນປະຊາຊົນຂອງພຣະອົງພ່າຍແພ້ຕໍ່ໜ້າສັດຕູ ເພາະພວກເຂົາໄດ້ເຮັດບາບຕໍ່
ພຣະອົງ ແລະພວກເຂົາຖອຍຫລັງກັບມາຫາພຣະອົງອີກ ຍອມຮັບພຣະນາມຂອງພຣະອົງ ແລະ
ອະທິຖານ ອ້ອນວອນຕໍ່ພຣະພັກ ພຣະອົງໃນພຣະວິຫານນີ້ [25]ກໍຂໍພຣະອົງຊົງຮັບຟັງໃນຟ້າສະ-
ຫວັນ ແລະໂຜດຍົກໂທດຄວາມຜິດບາບຂອງອິສຣາເອນປະຊາຊົນຂອງພຣະອົງແລະຂໍຊົງນຳ
ພວກເຂົາກັບມາຍັງແຜ່ນດິນ ຊຶ່ງພຣະອົງໄດ້ພຣະລາຊະທານແກ່ພວກເຂົາທັງຫລາຍ ແລະບັນ-
ພະບູລຸດຂອງພວກເຂົາ

[26]ເມື່ອຟ້າສະຫວັນປິດຢູ່ ແລະບໍ່ມີຝົນ ເພາະພວກເຂົາທັງຫລາຍໄດ້ເຮັດບາບຕໍ່ພຣະອົງ ຖ້າ
ພວກເຂົາໄດ້ອະທິຖານຕໍ່ສະຖານທີ່ນີ້ ແລະຍອມຮັບພຣະນາມຂອງພຣະອົງ ແລະຫັນຫລັງກັບ
ຈາກບາບຂອງພວກເຂົາ ເມື່ອພຣະອົງຊົງເຮັດໃຫ້ພວກເຂົາໄດ້ຮັບຄວາມທຸກໃຈ [27]ກໍຂໍພຣະອົງ
ຊົງຮັບຟັງໃນຟ້າສະຫວັນ ແລະຂໍໂຜດຍົກໂທດຄວາມຜິດບາບຂອງຜູ້ຮັບໃຊ້ຂອງພຣະອົງ ແລະ

ຂອງອິສຣາເອນປະຊາຊົນຂອງພຣະອົງ ເມື່ອພຣະອົງຊົງສອນທາງດີແກ່ພວກເຂົາ ຊຶ່ງພວກ
ເຂົາຄວນຈະດຳເນີນ ແລະ ຂໍຊົງປະທານຝົນເທິງແຜ່ນດິນຂອງພຣະອົງ ຊຶ່ງພຣະອົງໄດ້ພຣະ-
ລາຊະທານແກ່ປະຊາຊົນຂອງພຣະອົງເປັນມໍລະດົກນັ້ນ
28ຖ້າມີການອຶດຢາກອາຫານໃນແຜ່ນດິນ ຖ້າມີພະຍາດລະບາດ ເຂົ້າມານ ລາກິນເຂົ້າ ຫລື
ຕັກແຕນບິນ ຫລືຕັກແຕນຄານ ຫລືສັດຕູຂອງພວກເຂົາອ້ອມເມືອງໃນແຜ່ນດິນຂອງພວກເຂົາ
ໄວ້ທຸກດ້ານ ຈະເປັນໄພພິບັດຢ່າງໃດ ຫລືຄວາມເຈັບຢ່າງໃດມີຂຶ້ນກໍດີ 29ບໍ່ວ່າຄຳອະທິຖານ
ຢ່າງໃດ ຫລືຄຳອ້ອນວອນປະການໃດ ຊຶ່ງປະຊາຊົນຄົນໃດ ຫລືອິສຣາເອນ ປະຊາຊົນຂອງ
ພຣະອົງທັງໝົດທູນ ເພາະໄພພິບັດ ແລະຄວາມທຸກໃຈ ແລ້ວໄດ້ກາງມືຂອງພວກເຂົາສູ່ພຣະວິ-
ຫານນີ້ 30ຂໍພຣະອົງຊົງຮັບຟັງໃນຟ້າສະຫວັນອັນເປັນບ່ອນປະທັບຂອງພຣະອົງ ແລະພຣະລາ-
ຊະທານອະໄພໂທດບາບ ແລະຊົງປະທານແກ່ທຸກຄົນທີ່ພຣະອົງຊົງຮູ້ຈິດໃຈຕາມການປະພຶດທັງ
ໝົດຂອງພວກເຂົາ (ເພາະພຣະອົງເທົ່ານັ້ນທີ່ຊົງຮູ້ຈິດໃຈລູກທັງຫລາຍຂອງມະນຸດ) 31ເພື່ອວ່າ
ພວກເຂົາຈະໄດ້ຢຳເກງພຣະອົງ ແລະດຳເນີນໃນເສັ້ນທາງຂອງພຣະອົງ ຕະຫລອດວັນເວລາທີ່
ພວກເຂົາມີຊີວິດຢູ່ໃນແຜ່ນດິນ ຊຶ່ງພຣະອົງໄດ້ພຣະລາຊະທານແກ່ບັນພະບູລຸດຂອງຂ້າພະອົງ
ທັງຫລາຍ
32ຫລາຍກວ່ານັ້ນອີກ ກ່ຽວກັບຄົນຕ່າງດ້າວ ຜູ້ທີ່ບໍ່ແມ່ນອິສຣາເອນປະຊາຊົນຂອງພຣະອົງ
ເມື່ອພວກເຂົາມາຈາກ ປະເທດເມືອງໄກ ເພາະເຫັນແກ່ພຣະນາມອັນຍິ່ງໃຫຍ່ຂອງພຣະອົງ
ພຣະຫັດຊົງລິດຂອງພຣະອົງ ແລະພຣະກອນທີ່ຢຽດອອກຂອງພຣະອົງ ເມື່ອພວກເຂົາມາອະທິ-
ຖານຢູ່ຕໍ່ໜ້າພຣະວິຫານນີ້ 33ກໍຂໍພຣະອົງຊົງຮັບຟັງໃນຟ້າສະຫວັນອັນເປັນບ່ອນປະທັບຂອງ
ພຣະອົງ ແລະຂໍຊົງກະທຳຕາມທຸກສິ່ງທີ່ຄົນຕ່າງດ້າວໄດ້ທູນຂໍຕໍ່ພຣະອົງ ເພື່ອວ່າຊົນຊາດທັງ-
ຫລາຍແຫ່ງແຜ່ນດິນໂລກຈະຮູ້ຈັກພຣະນາມຂອງພຣະອົງ ແລະຢຳເກງພຣະອົງ ດັ່ງອິສຣາເອນ
ປະຊາຊົນຂອງພຣະອົງຢຳເກງພຣະອົງຢູ່ນັ້ນ ແລະເພື່ອພວກເຂົາທັງຫລາຍຈະຮູ້ວ່າພຣະວິຫານ
ທີ່ຂ້າພະອົງໄດ້ສ້າງໄວ້ນີ້ເປັນບ່ອນເອີ້ນອອກພຣະນາມຂອງພຣະອົງ
34ຖ້າປະຊາຊົນຂອງພຣະອົງອອກໄປເຮັດສົງຄາມຕໍ່ສູ້ສັດຕູຂອງພວກເຂົາ ຈະເປັນໂດຍທາງ
ໃດໆທີ່ພຣະອົງຊົງໃຊ້ພວກເຂົາອອກໄປກໍຕາມ ແລະພວກເຂົາໄດ້ອະທິຖານຕໍ່ພຣະອົງຢູ່ຕໍ່ໜ້າ
ເມືອງນີ້ ຊຶ່ງພຣະອົງຊົງເລືອກໄວ້ ແລະຕໍ່ໜ້າພຣະວິຫານທີ່ຂ້າພະອົງໄດ້ສ້າງເພື່ອພຣະນາມຂອງ
ພຣະອົງແລ້ວ 35ຂໍພຣະອົງຊົງຮັບຟັງຄຳອະທິຖານ ແລະຄຳອ້ອນວອນຂອງພວກເຂົາໃນຟ້າສະ-
ຫວັນ ແລະຂໍຊົງໃຫ້ສິດທິອັນຊອບທຳຂອງພວກເຂົາຄົງຢູ່
36ຖ້າພວກເຂົາເຮັດບາບຕໍ່ພຣະອົງ (ເພາະບໍ່ມີມະນຸດຈັກຄົນໜຶ່ງຊຶ່ງບໍ່ໄດ້ເຮັດບາບ) ແລະ
ພຣະອົງຊົງຄຽດຮ້າຍຕໍ່ພວກເຂົາ ແລະພຣະອົງຊົງມອບພວກເຂົາໄວ້ຕໍ່ສັດຕູ ພວກເຂົາຈຶ່ງຖືກຈັບ
ໄປເປັນຊະເລີຍໃນແຜ່ນດິນໃດໜຶ່ງບໍ່ວ່າໄກ ຫລືໃກ້ 37ແຕ່ຖ້າພວກເຂົາສຳນຶກຜິດໃນໃຈໃນ
ແຜ່ນດິນທີ່ເຂົາໄດ້ຖືກຈັບໄປເປັນຊະເລີຍນັ້ນ ແລະໄດ້ກັບໃຈ ອະທິຖານຕໍ່ພຣະອົງ ທູນວ່າ
'ຂ້າພະອົງທັງຫລາຍໄດ້ເຮັດບາບ ແລະໄດ້ປະພຶດຊົ່ວຮ້າຍ ໄດ້ເຮັດຄວາມຊົ່ວ' 38ຖ້າພວກເຂົາ
ທັງຫລາຍກັບມາຫາພຣະອົງດ້ວຍສຸດຈິດສຸດໃຈຂອງພວກເຂົາໃນບ່ອນທີ່ສັດຕູກວາດໄປເປັນຊະ-

ເລີຍນັ້ນ ແລະໄດ້ອະທິຖານຕໍ່ພຣະອົງຢູ່ຕໍ່ໜ້າແຜ່ນດິນຂອງພວກເຂົາ ຊຶ່ງພຣະອົງພຣະລາຊະ-
ທານແກ່ບັນພະບູລຸດຂອງພວກເຂົາ ແລະຕໍ່ເມືອງທີ່ພຣະອົງໄດ້ຊົງເລືອກໄວ້ ຕໍ່ພຣະວິຫານທີ່
ຂ້າພະອົງໄດ້ສ້າງໄວ້ເພື່ອພຣະນາມຂອງພຣະອົງ 39ແລ້ວຂໍພຣະອົງຊົງຮັບຟັງຄຳອະທິຖານ
ແລະຄຳອ້ອນວອນຂອງພວກເຂົາໃນຟ້າສະຫວັນອັນເປັນບ່ອນປະທັບຂອງພຣະອົງ ແລະຂໍຊົງ
ໃຫ້ສິດທິອັນຊອບທຳຂອງພວກເຂົາຄົງຢູ່ ແລະຂໍຊົງໂຜດຍົກໂທດໃຫ້ແກ່ປະຊາຊົນຂອງພຣະອົງ
ຜູ້ໄດ້ເຮັດບາບຕໍ່ພຣະອົງ

40ຂ້າແດ່ພຣະເຈົ້າຂອງຂ້າພະອົງ ບັດນີ້ ຂໍພຣະເນດຂອງພຣະອົງຊົງເບິ່ງຢູ່ ແລະຂໍພຣະກັນ
ຂອງພຣະອົງຮັບຟັງຄຳອະທິຖານແຫ່ງສະຖານທີ່ນີ້ 41ຂ້າແດ່ພຣະຜູ້ເປັນເຈົ້າ ບັດນີ້ ຂໍຊົງລຸກ-
ຂຶ້ນ ສະເດັດໄປໃນທີ່ປະທັບຂອງພຣະອົງ ທັງພຣະອົງ ແລະຫີບແຫ່ງລິດທານຸພາບຂອງພຣະ-
ອົງ ຂ້າແດ່ພຣະຜູ້ເປັນເຈົ້າ ຂໍໃຫ້ປະໂລຫິດຂອງພຣະອົງສວມຄວາມພົ້ນ ແລະໃຫ້ຜູ້ບໍລິສຸດ
ຂອງພຣະອົງຊົມຊື່ນຍິນດີໃນຄວາມປະເສີດຂອງພຣະອົງ 42ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຢ່າຊົງ
ຫັນໜ້າໜີຈາກຜູ້ທີ່ພຣະອົງຊົງເຈີມໄວ້ນັ້ນ ຂໍພຣະອົງຊົງລະນຶກເຖິງຄວາມເມດຕາຂອງພຣະອົງທີ່
ມີຕໍ່ດາວິດຜູ້ຮັບໃຊ້ຂອງພຣະອົງ”

# ບົດທີ 7

## ສະຫງ່າລາສີຂອງພຣະເຈົ້າ

1ເມື່ອໂຊໂລໂມນຈົບຄຳອະທິຖານຂອງພະອົງແລ້ວ ໄຟໄດ້ລົງມາຈາກຟ້າສະຫວັນໄໝ້ເຄື່ອງ
ເຜົາບູຊາແລະເຄື່ອງສັດບູຊາ ແລະສະຫງ່າລາສີຂອງພຣະຜູ້ເປັນເຈົ້າກໍເຕັມພຣະວິຫານ 2ປະ-
ໂລຫິດເຂົ້າໄປໃນພຣະວິຫານຂອງພຣະຜູ້ເປັນເຈົ້າບໍ່ໄດ້ ເພາະວ່າພຣະລັດສະໝີຂອງພຣະຜູ້-
ເປັນເຈົ້າເຕັມພຣະວິຫານຂອງພຣະຜູ້ເປັນເຈົ້າ 3ເມື່ອບັນດາຊົນອິສຣາເອນໄດ້ເຫັນໄຟລົງມາ
ແລະພຣະລັດສະໝີຂອງພຣະຜູ້ເປັນເຈົ້າຢູ່ເທິງພຣະວິຫານ ພວກເຂົາທັງຫລາຍກໍກົ້ມຂາບລົງ
ເຖິງພື້ນຫີນ ແລະໄດ້ນະມັດສະການສັນລະເສີນພຣະຜູ້ເປັນເຈົ້າວ່າ “ເພາະພຣະອົງປະເສີດ
ເພາະຄວາມເມດຕາຂອງພຣະອົງດຳລົງຢູ່ເປັນນິດ”

4ແລ້ວກະສັດ ແລະບັນດາປະຊາຊົນທັງຫລາຍໄດ້ຖວາຍເຄື່ອງສັດບູຊາຕໍ່ພຣະພັກພຣະຜູ້-
ເປັນເຈົ້າ 5ກະສັດໂຊໂລໂມນຊົງຖວາຍເຄື່ອງສັດບູຊາເປັນງົວສອງໝື່ນສອງພັນໂຕ ແລະແກະ
ໜຶ່ງແສນສອງໝື່ນໂຕ ດັ່ງນີ້ແຫລະ ກະສັດ ແລະປະຊາຊົນທັງປວງໄດ້ອຸທິດຖວາຍພຣະວິຫານ
ແຫ່ງພຣະເຈົ້າ 6ບັນດາປະໂລຫິດກໍຢືນປະຈຳຕຳແໜ່ງຂອງຕົນ ທັງຄົນເລວີພ້ອມກັບເຄື່ອງດົນ-
ຕີຖວາຍແດ່ພຣະຜູ້ເປັນເຈົ້າ ຊຶ່ງກະສັດດາວິດໄດ້ຊົງກະທຳເພື່ອສັນລະເສີນພຣະຜູ້ເປັນເຈົ້າ
ເມື່ອດາວິດໄດ້ຖວາຍສາທຸການດ້ວຍການບົວລະບັດຂອງພວກເຂົາທັງຫລາຍ ເພາະຄວາມເມດ
ຕາຂອງພຣະອົງດຳລົງຢູ່ເປັນນິດ ແລະ ປະໂລຫິດກໍເປົ່າແກຂ້າງໜ້າພວກເຂົາ ອິສຣາເອນທັງ
ປວງກໍຢືນຢູ່ 7ໂຊໂລໂມນຊົງເຮັດພິທີຊຳລະສ່ວນກາງຂອງເດີ່ນຊຶ່ງຢູ່ຂ້າງໜ້າພຣະວິຫານຂອງ
ພຣະຜູ້ເປັນເຈົ້າໃຫ້ເປັນ ສ່ວນບໍລິສຸດ ເພາະພຣະອົງຊົງຖວາຍເຄື່ອງເຜົາບູຊາແລະໄຂມັນຂອງ
ເຄື່ອງບູຊາເພື່ອຄວາມສາມັກຄີທຳຢູ່ບ່ອນນັ້ນ ເພາະວ່າແທ່ນທອງເຫລືອງທີ່ໂຊໂລໂມນຊົງສ້າງ

ໄວ້ນັ້ນ ບໍ່ພໍບັນຈຸເຄື່ອງເຜົາບູຊາ ເຄື່ອງບູຊາພືດຜົນເປັນເມັດແລະໄຂມັນ 8ໃນເທື່ອນັ້ນ ໂຊໂລ-
ໂມນ ຊົງຖືເທດສະການຢູ່ເຈັດມື້ ແລະ ອິສຣາເອນ ທັງປວງຢູ່ກັບພະອົງດ້ວຍ ເປັນຊຸມນຸມຊົນ
ໃຫຍ່ຫລາຍ ຕັ້ງແຕ່ທາງເຂົ້າເມືອງ ຮາມັດ ຈົນຮອດແມ່ນໍ້າ ເອຢິບ 9ແລະໃນມື້ທີແປດ ພວກເຂົາ
ທັງຫລາຍມີການປະຊຸມອັນສັກສິດ ເພາະໄດ້ມີງານມອບຖວາຍແທ່ນບູຊາເຈັດມື້ ແລະຖືເທດ-
ສະການກິນລ້ຽງມາເຈັດມື້ແລ້ວ 10ເມື່ອວັນທີຊາວສາມຂອງເດືອນທີເຈັດ ພະອົງຊົງໃຫ້ປະຊາຊົນ
ກັບໄປເຕັນຂອງຕົນ ໃຫ້ມີໃຈຊື່ນບານ ແລະ ຍິນດີດ້ວຍຄວາມດີຊຶ່ງ ພຣະຜູ້ເປັນເຈົ້າ ໄດ້ຊົງສະ-
ແດງແກ່ ດາວິດ ແລະແກ່ ໂຊໂລໂມນ ແລະແກ່ ອິສຣາເອນ ປະຊາຊົນຂອງພຣະອົງ
11ດັ່ງນີ້ແຫລະ ໂຊໂລໂມນ ຊົງສ້າງພຣະວິຫານຂອງ ພຣະຜູ້ເປັນເຈົ້າ ແລະພະລາຊະວັງສຳ-
ເລັດ ຄືທຸກຢ່າງ ທີ່ພະອົງຊົງກ່າວໃນເລື່ອງພຣະວິຫານຂອງ ພຣະຜູ້ເປັນເຈົ້າ ແລະໃນເລື່ອງພະ
ລາຊະສຳນັກຂອງພະອົງ ພະອົງກໍຊົງກະທຳໃຫ້ສຳເລັດໝົດ

## ຄຳໝັ້ນສັນຍາຂອງພຣະເຈົ້າກັບໂຊໂລໂມນ[ກ]

12ແລ້ວ ພຣະຜູ້ເປັນເຈົ້າ ຊົງປະກົດແກ່ ໂຊໂລໂມນ ໃນ ເວລາກາງຄືນ ແລະກ່າວກັບພະອົງວ່າ
"ເຮົາໄດ້ຍິນຄຳອະທິຖານຂອງເຈົ້າ ແລະໄດ້ເລືອກສະຖານທີ່ນີ້ສຳລັບເຮົາໃຫ້ເປັນວິຫານແຫ່ງ
ເຄື່ອງສັດບູຊາ 13ຖ້າເຮົາປິດຟ້າສະຫວັນບໍ່ໃຫ້ຝົນຕົກ ຫລືເຮົາບັນຊາໃຫ້ຕັກແຕນມາກິນແຜ່ນດິນ
ຫລືສົ່ງພະຍາດລະບາດມາໃນທ່າມກາງປະຊາຊົນຂອງເຮົາ 14ຖ້າປະຊາຊົນຂອງເຮົາຜູ້ທີ່ເອີ້ນ
ອອກນາມຂອງເຮົານັ້ນຈະຖ່ອມຕົວລົງ ແລະອະທິຖານ ແລ້ວສະແຫວງຫາເຮົາ ແລະ ຫລີກໜີ
ຈາກທາງຊົ່ວຂອງຕົນ ເຮົາກໍຈະຟັງຈາກສະຫວັນ ແລະຈະໃຫ້ອະໄພແກ່ບາບຂອງຄົນນັ້ນ ແລະ
ຈະຮັກສາແຜ່ນດິນຂອງລາວໃຫ້ຫາຍ 15ບັດນີ້ ຕາຂອງເຮົາຈະມືນຢູ່ ແລະຫູຂອງເຮົາຈະຟັງຄຳ
ອະທິຖານທີ່ເຂົາທັງຫລາຍອະທິຖານໃນສະຖານທີ່ນີ້ 16ເພາະບັດນີ້ ເຮົາໄດ້ເລືອກ ແລະເຮັດໃຫ້
ວິຫານນີ້ເປັນບ່ອນບໍລິສຸດ ເພື່ອນາມຂອງເຮົາຈະຢູ່ບ່ອນນັ້ນເປັນນິດ ຕາຂອງເຮົາ ແລະໃຈຂອງ
ເຮົາຈະຢູ່ບ່ອນນັ້ນຕະຫລອດເວລາ 17ສ່ວນເຈົ້າ ຖ້າເຈົ້າດຳເນີນຊີວິດຕໍ່ໜ້າເຮົາຄື ດາວິດ ພໍ່ຂອງ
ເຈົ້າດຳເນີນນັ້ນ ໂດຍເຮັດຕາມທຸກສິ່ງທີ່ເຮົາໄດ້ບັນຊາແກ່ເຈົ້າ ແລະຮັກສາກົດເກນຂອງເຮົາກັບ
ຄຳຕັດສິນຂອງເຮົາ 18ແລ້ວເຮົາຈະສະຖາປະນາລາຊະບັນລັງແຫ່ງອານາຈັກຂອງເຈົ້າ ດັ່ງທີ່ເຮົາ
ໄດ້ເຮັດຄຳໝັ້ນສັນຍາໄວ້ກັບ ດາວິດ ພໍ່ຂອງເຈົ້າວ່າ 'ເຈົ້າຈະບໍ່ຂາດຊາຍຜູ້ໜຶ່ງທີ່ຈະປົກຄອງເໜືອ
ອິສຣາເອນ'

## ພຣະເຈົ້າຊົງເຕືອນໂຊໂລໂມນ

19ແຕ່ຖ້າເຈົ້າຫັນໄປ ແລະປະຖິ້ມກົດເກນຂອງເຮົາກັບບັນຍັດຂອງເຮົາທີ່ເຮົາຕັ້ງໄວ້ຕໍ່ໜ້າເຈົ້າ
ແລ້ວໄປບົວລະບັດພະອື່ນ ແລະນະມັດສະການພະເຫລົ່ານັ້ນ 20ເຮົາຈະຖອນຮາກພວກເຂົາທັງ-
ຫລາຍຈາກແຜ່ນດິນຂອງເຮົາ ຊຶ່ງເຮົາໄດ້ໃຫ້ແກ່ພວກເຂົາ ແລະວິຫານຊຶ່ງເຮົາຊຳລະໃຫ້ບໍລິສຸດ
ເພື່ອນາມຂອງເຮົາ ເຮົາຈະໂຍນອອກໄປຈາກສາຍຕາຂອງເຮົາ ແລະ ເຮົາຈະເຮັດໃຫ້ເປັນເລື່ອງ
ເວົ້າ ແລະເປັນທີ່ໝິ່ນປະໝາດທ່າມກາງຊົນຊາດທັງຫລາຍ 21ແລະວິຫານທີ່ສູງສົ່ງນີ້ ທຸກຄົນທີ່
ຜ່ານໄປຈະປະຫລາດໃຈ ແລະກ່າວວ່າ 'ເຫດໃດ ພຣະຜູ້ເປັນເຈົ້າ ຈຶ່ງຊົງກະທຳເຊັ່ນນີ້ແກ່ແຜ່ນ-

[ກ]1 ປະຫວັດກະສັດ 9:19

ດິນນີ້ ແລະແກ່ພຣະວິຫານນີ້’ [22]ແລ້ວເຂົາທັງຫລາຍຈະຕອບວ່າ ‘ເພາະພວກເຂົາປະຖິ້ມພຣະ-
ຜູ້ເປັນເຈົ້າ ພຣະເຈົ້າແຫ່ງບັນພະບູລຸດຂອງຕົນ ຜູ້ຊົງນຳພວກເຂົາອອກຈາກແຜ່ນດິນ ເອຢິບ
ແລະໄດ້ນັບຖືພະອື່ນ ນະມັດສະການພະເຫລົ່ານັ້ນ ທັງບົວລະບັດດ້ວຍ ສະນັ້ນ ພຣະອົງຈຶ່ງໄດ້
ຊົງນຳເຫດຮ້າຍທັງໝົດນີ້ມາເຖິງພວກເຂົາ’”

# ບົດທີ 8

## ການຂະຫຍາຍລາຊະອານາຈັກ ແລະຊື່ສຽງຂອງໂຊໂລໂມນຊ່າລືໄປທົ່ວ[ກ]

[1]ຢູ່ມາເມື່ອໝົດຊາວປີທີ່ ໂຊໂລໂມນ ໄດ້ຊົງສ້າງພຣະວິຫານຂອງ ພຣະຜູ້ເປັນເຈົ້າ ແລະພະລາ-
ຊະວັງສ່ວນພະອົງ [2]ໂຊໂລໂມນ ໄດ້ຊົງເສີມສ້າງຫົວເມືອງຊຶ່ງ ຮູຣາມ ໄດ້ຖວາຍແກ່ພະອົງ ແລ້ວ
ໃຫ້ຄົນ ອິສຣາເອນ ອາໄສຢູ່ໃນນັ້ນ [3]ແລະ ໂຊໂລໂມນ ໄດ້ສະເດັດໄປຍັງ ຮາມັດ-ໂຊບາ ແລະຍຶດ
ເມືອງນັ້ນໄດ້ [4]ພະອົງໄດ້ຊົງສ້າງເມືອງ ຕາດໂມ ໄວ້ໃນຖິ່ນແຫ້ງແລ້ງກັນດານ ແລະຫົວເມືອງຄັງ
ຫລວງທັງໝົດ ຊຶ່ງພະອົງຊົງສ້າງໄວ້ໃນ ຮາມັດ [5]ພະອົງໄດ້ຊົງສ້າງ ເມືອງ ເບັດ-ໂຮໂຣນ ເທິງ
ແລະ ເບັດ-ໂຮໂຣນ ລຸ່ມດ້ວຍ ເປັນເມືອງທີ່ໝັ້ນຄົງ ມີກຳແພງ ປະຕູເມືອງ ແລະດ່ານ [6]ຊົງສ້າງ
ເມືອງ ບາອາລາດ ແລະຫົວເມືອງຄັງຫລວງທັງປວງທີ່ ໂຊໂລໂມນ ຊົງມີຢູ່ ແລະເມືອງທັງປວງ
ສຳລັບລົດຮົບຂອງພະອົງ ແລະເມືອງທັງປວງສຳລັບພົນທະຫານມ້າຂອງພະອົງ ແລະສິ່ງໃດໆ
ຊຶ່ງພະອົງປະສົງຈະສ້າງໃນ ເຢຣູຊາເລັມ ໃນ ເລບານອນ ແລະໃນແຜ່ນດິນທັງໝົດທີ່ຢູ່ໃນປົກ-
ຄອງຂອງພະອົງ

[7]ປະຊາຊົນທັງປວງທີ່ເຫລືອຢູ່ໃນພວກຄົນ ຮິດຕີ ຄົນ ອະໂມຣິດ ຄົນ ເປຣິຊີ ຄົນ ຮີວີ ແລະ
ຄົນ ເຢບຸດ ຜູ້ທີ່ບໍ່ແມ່ນ ອິສຣາເອນ [8]ຈາກລູກຫລານຂອງຄົນເຫລົ່ານີ້ ຜູ້ເຫລືອຕໍ່ມາໃນແຜ່ນດິນ
ຜູ້ຊຶ່ງປະຊາຊົນ ອິສຣາເອນ ບໍ່ໄດ້ທຳລາຍ ໂຊໂລໂມນ ໄດ້ໃຫ້ປະຊາຊົນເຫລົ່ານີ້ເປັນຂ້າທາດແຮງ
ງານແລະພວກເຂົາທັງຫລາຍກໍເປັນຢູ່ຈົນທຸກມື້ນີ້ [9]ແຕ່ສ່ວນຄົນ ອິສຣາເອນ ນັ້ນ ໂຊໂລໂມນ ບໍ່ໄດ້
ໃຫ້ເປັນຂ້າທາດແຮງງານ ພວກເຂົາທັງຫລາຍເປັນທະຫານ ແລະເປັນນາຍທະຫານຂອງພະອົງ
ເປັນຜູ້ບັງຄັບບັນຊາລົດຮົບຂອງພະອົງ ແລະພົນທະຫານມ້າຂອງພະອົງ [10]ແລະຄົນຕໍ່ໄປນີ້ເປັນ
ເຈົ້າໜ້າທີ່ຊັ້ນຜູ້ໃຫຍ່ຂອງກະສັດ ໂຊໂລໂມນ ມີສອງຮ້ອຍຫ້າສິບຄົນ ເປັນຜູ້ປົກຄອງປະຊາຊົນ

[11]ໂຊໂລໂມນ ຊົງນຳທິດາຂອງ ຟາຣາໂອ ຂຶ້ນມາຈາກນະຄອນ ດາວິດ ມາໃນພະລາຊະວັງທີ່ພະ
ອົງຊົງສ້າງໄວ້ໃຫ້ພະນາງ ເພາະພະອົງກ່າວວ່າ “ມະເຫສີຂອງເຮົາບໍ່ຄວນຢູ່ໃນວັງຂອງ ດາວິດ
ກະສັດແຫ່ງ ອິສຣາເອນ ເພາະສະຖານທີ່ທັງຫລາຍທີ່ຫີບຂອງ ພຣະຜູ້ເປັນເຈົ້າ ມາເຖິງເປັນບ່ອນ
ບໍລິສຸດ”

[12]ແລ້ວ ໂຊໂລໂມນ ຊົງຖວາຍ ເຄື່ອງ ເຜົາບູຊາແດ່ ພຣະຜູ້ເປັນເຈົ້າ ເທິງ ແທ່ນບູຊາຂອງ ພຣະຜູ້-
ເປັນເຈົ້າ ຊຶ່ງພະອົງຊົງສ້າງໄວ້ຢູ່ໜ້າລະບຽງ [13]ຕາມໜ້າທີ່ປະຈຳວັນທີ່ຕ້ອງເຮັດ ເປັນການ
ຖວາຍບູຊາຕາມບັນຍັດຂອງ ໂມເຊ ໃນວັນສະບາໂຕ ໃນວັນຂຶ້ນຄ່ຳໜຶ່ງ ແລະໃນວັນເທດສະ-
ການຕາມກຳນົດ ປະຈຳປີສາມເທດສະການ ຄືເທດສະການກິນເຂົ້າຈີ່ບໍ່ມີເຊື້ອແປ້ງ ເທດສະ-

[ກ]1 ປະຫວັດກະສັດ 9:10-28

ການເກັບກ່ຽວ ແລະເທດສະການປຸກຕູບຢູ່ [14]ຕາມພະບັນຊາຂອງດາວິດພໍ່ຂອງພະອົງ ພະອົງ
ຊົງກຳນົດແບ່ງເວນຍາມປະໂລຫິດສຳລັບການບົວລະບັດ ແລະແບ່ງຄົນເລວີໃຫ້ປະຈຳໜ້າທີ່
ການສັນລະເສີນ ແລະການບົວລະບັດຕໍ່ໜ້າປະໂລຫິດ ຕາມໜ້າທີ່ປະຈຳວັນທີ່ຕ້ອງເຮັດ ແລະ
ຄົນເຝົ້າປະຕູທຸກປະຕູ ເພາະວ່າດາວິດຄົນຂອງພຣະເຈົ້າຊົງບັນຊາໄວ້ເຊັ່ນນັ້ນ [15]ແລະພວກ
ເຂົາທັງຫລາຍບໍ່ໄດ້ຫັນໄປຈາກສິ່ງທີ່ກະສັດໄດ້ຊົງບັນຊາປະໂລຫິດ ແລະຄົນເລວີກ່ຽວກັບເລື່ອງ
ໃດໆ ແລະກ່ຽວກັບເລື່ອງຄັງ

[16]ບັນດາພະລາຊະກິດຂອງໂຊໂລໂມນກໍລຸລ່ວງໄປຕັ້ງແຕ່ມື້ທີ່ວາງຮາກພຣະວິຫານຂອງ
ພຣະຜູ້ເປັນເຈົ້າ ຈົນສຳເລັດງານ ດັ່ງນັ້ນ ພຣະວິຫານຂອງພຣະຜູ້ເປັນເຈົ້າກໍສຳເລັດຄົບຖ້ວນ

[17]ແລ້ວໂຊໂລໂມນສະເດັດໄປໃນເອັດຊີໂອນ-ເກເບ ແລະເມືອງເອລັດທີ່ແຄມທະເລໃນແຜ່ນ-
ດິນເອໂດມ [18]ແລະຮູຣາມກໍໃຫ້ຂ້າລາຊະການຂອງພະອົງລົງເຮືອ ແລະຂ້າລາຊະການທີ່ຄຸ້ນ
ເຄີຍກັບທະເລໄປ ໃຫ້ໂຊໂລໂມນ ແລະພວກເຂົາໄປເຖິງເມືອງໂອຟີພ້ອມກັບຂ້າລາຊະການ
ຂອງໂຊໂລໂມນ ນຳເອົາຄຳຈາກບ່ອນນັ້ນໜັກສີ່ຮ້ອຍຫ້າສິບຕາລັນຕົນມາໃຫ້ກະສັດໂຊໂລໂມນ

# ບົດທີ 9

## ພະລາຊີນີແຫ່ງເຊບາຊົງເຂົ້າເຝົ້າກະສັດໂຊໂລໂມນ[ກ]

[1]ເມື່ອພະລາຊີນີແຫ່ງເຊບາຊົງໄດ້ຍິນກິດຕິສັບຂອງໂຊໂລໂມນ ພະນາງກໍສະເດັດມາເຢຣູ-
ຊາເລັມ ເພື່ອທົດລອງພະອົງດ້ວຍບັນຫາຫຍຸ້ງຍາກຕ່າງໆ ພ້ອມດ້ວຍຂ້າລາຊະບໍລິພານຫລວງ-
ຫລາຍ ກັບອູດບັນທຸກເຄື່ອງຫອມ ແລະຄຳເປັນຈຳນວນຫລາຍ ກັບເພັດພອຍຕ່າງໆ ແລະເມື່ອ
ພະນາງສະເດັດມາເຖິງໂຊໂລໂມນແລ້ວ ພະນາງທູນເລື່ອງໃນໃຈຂອງພະນາງທຸກປະການ
[2]ແລະໂຊໂລໂມນກ່າວຕອບບັນຫາຂອງພະນາງທັງໝົດ ບໍ່ມີສິ່ງໃດທີ່ເຊື່ອງໄວ້ໃນໂຊໂລໂມນ
ຊຶ່ງພະອົງຈະຊົງອະທິບາຍແກ່ພະນາງບໍ່ໄດ້ [3]ແລະເມື່ອພະລາຊີນີແຫ່ງເຊບາຊົງເຫັນພະສະຕິ-
ປັນຍາຂອງໂຊໂລໂມນ ແລະພະລາຊະວັງທີ່ພະອົງຊົງສ້າງ [4]ທັງອາຫານທີ່ຢູ່ເທິງໂຕະສະເຫວີຍ
ກັບບັນດາຂ້າລາຊະການປະຈຳຢູ່ ແລະຂ້າໃຊ້ທີ່ຄອຍຖ້າຮັບໃຊ້ຢູ່ ຕະຫລອດຈົນເຄື່ອງແຕ່ງກາຍ
ແລະພະນັກງານເຊີນຖ້ວຍຂອງພະອົງ ແລະການສະເດັດຂຶ້ນໄປໃນພຣະວິຫານຂອງພຣະຜູ້-
ເປັນເຈົ້າ ພະໄທຂອງພະນາງກໍເສົ້າສະລົດໃຈລົງບາດດຽວ [5]ພະນາງທູນກະສັດວ່າ “ຂ່າວຄາວ
ທີ່ຂ້ານ້ອຍໄດ້ຍິນໃນປະເທດຂອງຂ້ານ້ອຍເຖິງພະລາຊະກິດ ແລະພະສະຕິປັນຍາຂອງພະອົງ
ເປັນຄວາມຈິງ [6]ແຕ່ຂ້ານ້ອຍບໍ່ໄດ້ເຊື່ອຖ້ອຍຄຳນັ້ນ ຈົນຂ້ານ້ອຍມາເຝົ້າ ແລະຕາຂອງຂ້ານ້ອຍ
ໄດ້ເຫັນເອງ ແລະເບິ່ງແມ ທີ່ພວກເຂົາບອກແກ່ຂ້ານ້ອຍກໍບໍ່ເທົ່າເຄິ່ງໜຶ່ງຂອງພະສະຕິປັນຍາອັນ
ຍິ່ງໃຫຍ່ຂອງພະອົງ ພະອົງລ້ຳເລີດຫລາຍກວ່າຂ່າວຄາວທີ່ຂ້ານ້ອຍໄດ້ຍິນ [7]ບັນດາຄົນຂອງພະ
ອົງກໍເປັນສຸກ ບັນດາຂ້າລາຊະການ ຜູ້ຢູ່ງານປະຈຳຕໍ່ພະພັກພະອົງ ແລະຟັງພະສະຕິປັນຍາ
ຂອງພະອົງກໍເປັນສຸກ [8]ສາທຸການແດ່ພຣະຜູ້ເປັນເຈົ້າ ພຣະເຈົ້າຂອງພະອົງ ຜູ້ຊົງພໍພຣະໄທ
ໃນພະອົງ ແລະຊົງແຕ່ງຕັ້ງພະອົງໄວ້ເທິງບັນລັງ ເປັນກະສັດເພື່ອພຣະຜູ້ເປັນເຈົ້າພຣະເຈົ້າ

[ກ]1 ປະຫວັດກະສັດ 10:1-13

ຂອງພະອົງ ເພາະ ພຣະເຈົ້າ ຂອງພະອົງຊົງຮັກ ອິສຣາເອນ ແລະຈະສະຖາປະນາໄວ້ເປັນນິດ
ພຣະອົງຈຶ່ງໄດ້ຊົງແຕ່ງຕັ້ງໃຫ້ພະອົງເປັນກະສັດເໜືອພວກເຂົາທັງຫລາຍ ເພື່ອພະອົງຈະຊົງອຳ-
ນວຍຄວາມຍຸດຕິທຳ ແລະຄວາມທ່ຽງທຳ” [9]ແລ້ວພະນາງກໍຖວາຍຄຳໜຶ່ງຮ້ອຍຊາວຕະລັນຕົນ
ແກ່ກະສັດ ທັງເຄື່ອງຫອມເປັນຈຳນວນຫລາຍ ແລະເພັດພອຍຕ່າງໆ ບໍ່ມີເຄື່ອງຫອມໃດໆຄືທີ່
ພະລາຊິນີແຫ່ງ ເມືອງ ເຊບາ ຖວາຍແກ່ກະສັດ ໂຊໂລໂມນ [10]ຫລາຍກວ່ານັ້ນອີກ ຂ້າລາຊະການ
ຂອງຮູຣາມ ແລະຂ້າລາຊະການຂອງໂຊໂລໂມນ ຜູ້ນຳຄຳມາຈາກໂອຟີໄດ້ນຳໄມ້ດູ່ ແລະເພັດ
ພອຍຕ່າງໆມາ [11]ແລ້ວກະສັດຊົງໃຊ້ໄມ້ດູ່ເຮັດຂັ້ນໄດພຣະວິຫານຂອງພຣະຜູ້ເປັນເຈົ້າ ແລະ
ພະລາຊະວັງ ທັງເຮັດພິນຄູ່ ແລະພິນໃຫຍ່ໃຫ້ແກ່ນັກຮ້ອງ ຊຶ່ງແຕ່ກ່ອນບໍ່ເຄີຍເຫັນມີແບບນີ້ໃນ
ແຜ່ນດິນຢູດາ [12]ກະສັດ ໂຊໂລໂມນ ພະລາຊະທານທຸກຢ່າງແກ່ພະລາຊິນີແຫ່ງ ເຊບາ ຕາມທີ່ພະ
ນາງຊົງມີພະປະສົງ ບໍ່ວ່າພະນາງຈະທູນຂໍສິ່ງໃດ ນອກເໜືອໄປຈາກສິ່ງທີ່ພະນາງນຳມາຖວາຍ
ກະສັດ ດັ່ງນັ້ນພະນາງກໍສະເດັດກັບໄປແຜ່ນດິນຂອງພະນາງ ພ້ອມກັບຂ້າລາຊະການຂອງພະ
ນາງ

## ຊັບສົມບັດ ແລະຄວາມຈະເລີນຮຸ່ງເຮືອງຂອງໂຊໂລໂມນ[ກ]

[13]ນ້ຳໜັກຄຳທີ່ນຳມາສົ່ງ ໂຊໂລໂມນ ໃນປີໜຶ່ງນັ້ນ ເປັນຄຳຫົກຮ້ອຍຫົກສິບຫົກຕະລັນຕົນ
[14]ນອກເໜືອຈາກຄຳທີ່ນັກການຄ້າ ແລະພໍ່ຄ້າໄດ້ນຳມາ ແລະກະສັດທັງປວງຂອງປະເທດອາ-
ຫລັບ ແລະບັນດາເຈົ້າເມືອງແຫ່ງແຜ່ນດິນໄດ້ນຳຄຳ ແລະເງິນມາໃຫ້ໂຊໂລໂມນ [15]ກະສັດໂຊ-
ໂລໂມນຊົງສ້າງໂລ່ໃຫຍ່ສອງຮ້ອຍອັນດ້ວຍຄຳ ໂລ່ອັນໜຶ່ງໃຊ້ຄຳຕີຫົກຮ້ອຍເຊເຂ [16]ແລະພະອົງ
ຊົງສ້າງໂລ່ສາມຮ້ອຍອັນດ້ວຍຄຳ ໂລ່ອັນໜຶ່ງໃຊ້ຄຳສາມຮ້ອຍເຊເຂ ແລະກະສັດກໍຊົງເກັບໂລ່
ໄວ້ໃນພະລາຊະວັງແຫ່ງປ່າ ເລບານອນ

[17]ກະສັດຊົງສ້າງພະທີ່ນັ່ງງາຊ້າງຂະໜາດໃຫຍ່ດ້ວຍ ແລະຊົງໂອບດ້ວຍຄຳບໍລິສຸດ [18]ພະທີ່
ນັ່ງນັ້ນມີຂັ້ນໄດຫົກຂັ້ນ ກັບບ່ອນຮອງພະບາດເຮັດດ້ວຍຄຳທີ່ຕິດຢູ່ກັບພະທີ່ນັ່ງ ທັງສອງຂ້າງ
ຂອງພະທີ່ນັ່ງມີບ່ອນວາງພະຫັດ ແລະສິງໃຫຍ່ສອງໂຕຢືນຢູ່ຂ້າງໆບ່ອນວາງພະຫັດ [19]ມີສິງ
ໃຫຍ່ອີກສິບສອງຕົວຢືນຢູ່ບ່ອນນັ້ນ ເທິງບັນໄດຫົກຂັ້ນທັງສອງຂ້າງ ພວກເຂົາບໍ່ເຄີຍເຮັດໃນ
ລາຊະອານາຈັກໃດໆຄືແບບນີ້

[20]ພາຊະນະທັງໝົດສຳລັບເຄື່ອງດື່ມຂອງກະສັດ ໂຊໂລໂມນ ເຮັດດ້ວຍຄຳ ແລະພາຊະນະທັງ
ໝົດຂອງພະລາຊະວັງປ່າ ເລບານອນ ເຮັດດ້ວຍຄຳບໍລິສຸດ ບໍ່ມີບ່ອນໃດເຮັດດ້ວຍເງິນເລີຍ ເງິນ
ນັ້ນຖືວ່າເປັນຂອງບໍ່ມີຄ່າຫຍັງໃນສະໄໝຂອງ ໂຊໂລໂມນ [21]ເພາະເຮືອຂອງກະສັດແລ່ນໄປຕາ-
ຊິດພ້ອມກັບຂ້າລາຊະການຂອງຮູຣາມ ກຳປັ່ນຕາຊິດນຳຄຳ ເງິນ ງາຊ້າງ ລິງ ແລະນົກຍູງ
ມາສາມປີຕໍ່ເທື່ອ

[22]ດັ່ງນັ້ນແຫລະ ກະສັດ ໂຊໂລໂມນ ຈຶ່ງໄດ້ປຽບກວ່າກະສັດອື່ນໆແຫ່ງແຜ່ນດິນໂລກໃນເລື່ອງ
ຊັບສົມບັດ ແລະສະຕິປັນຍາ [23]ແລະກະສັດທັງໝົດແຫ່ງແຜ່ນດິນໂລກກໍສະແຫວງຫາທີ່ຈະເຂົ້າ
ເຝົ້າໂຊໂລໂມນ ເພື່ອຈະຟັງພະສະຕິປັນຍາທີ່ພຣະເຈົ້າຊົງພຣະລາຊະທານໄວ້ໃນໃຈຂອງພະອົງ

[ກ]1 ປະຫວັດກະສັດ 10:14-29

24ທຸກຄົນກໍນຳເຄື່ອງບັນນາການຂອງຕົນມາ ເປັນເຄື່ອງເຮັດດ້ວຍເງິນ ເຄື່ອງເຮັດດ້ວຍຄຳ ແລະ
ເຄື່ອງແຕ່ງກາຍ ເຄື່ອງອາວຸດ ເຄື່ອງຫອມ ມ້າ ແລະລໍ ຕາມຈຳນວນກຳນົດທຸກໆປີ
25ແລະ ໂຊໂລໂມນ ຊົງມີໂຮງລ້ຽງມ້າສີ່ພັນບ່ອນສຳລັບມ້າ ແລະລົດຮົບ ແລະມີພົນທະຫານຂີ່
ມ້າໜຶ່ງໝື່ນສອງພັນຄົນ ຊຶ່ງພະອົງຊົງໃຫ້ປະຈຳຢູ່ໃນຫົວເມືອງລົດຮົບແລະຢູ່ກັບກະສັດທີ່ເມືອງ
ເຢຣູຊາເລັມ 26ແລະພະອົງຊົງປົກຄອງເໜືອກະສັດທັງປວງຕັ້ງແຕ່ແມ່ນ້ຳຮອດແຜ່ນດິນຂອງຄົນ
ຟີລິດສະຕິນ ແລະຮອດເຂດແດນຂອງ ເອຢິບ 27ກະສັດຊົງເຮັດໃຫ້ເງິນນັ້ນເປັນຂອງທຳມະດາ
ໃນເມືອງ ເຢຣູຊາເລັມ ເໝືອນກ້ອນຫີນ ແລະເຮັດໃຫ້ມີໄມ້ສົນຢ່າງຫລວງຫລາຍຄືກັບໄມ້ໝາກ-
ເດື່ອແຫ່ງພູເຂົາ 28ແລະພວກເຂົານຳມ້າເຂົ້າມາຖວາຍ ໂຊໂລໂມນ ຈາກ ເອຢິບ ແລະຈາກແຜ່ນ-
ດິນທັງປວງ

## ການສິ້ນພະຊົນຂອງໂຊໂລໂມນ[ກ]

29ສ່ວນພະລາຊະກິດນອກນັ້ນຂອງ ໂຊໂລໂມນ ຕັ້ງແຕ່ຕົ້ນຈົນຈົບ ກໍ່ໄດ້ບັນທຶກໄວ້ໃນໜັງສື
ຂອງ ນາທານ ຜູ້ທຳນວາຍ ແລະໃນຄຳທຳນວາຍຂອງ ອາຮີຢາ ຊາວ ຊີໂລ ແລະໃນນິມິດຂອງ
ອິດໂດ ຜູ້ທຳນວາຍກ່ຽວກັບ ເຢໂຣໂບອາມ ລູກຊາຍ ເນບັດ 30ໂຊໂລໂມນ ຊົງປົກຄອງໃນເມືອງ ເຢ-
ຣູຊາເລັມ ເໜືອ ອິສຣາເອນ ທັງປວງສີ່ສິບປີ 31ແລະ ໂຊໂລໂມນ ລ່ວງລັບໄປຢູ່ກັບບັນພະບູລຸດ
ຂອງພະອົງ ພວກເຂົາຝັງພະສົບໄວ້ໃນນະຄອນ ດາວິດ ພໍ່ຂອງພະອົງ ແລ້ວ ເຣໂຣໂບອາມ ລູກ
ຊາຍຂອງພະອົງຂຶ້ນປົກຄອງແທນພະອົງ

# ບົດທີ 10

## ເຣໂຣໂບອາມປົກຄອງແທນໂຊໂລໂມນ ຄວາມໂງ່ຈ້າຂອງເຣໂຣໂບອາມ[ຂ]

1ເຣໂຣໂບອາມ ໄດ້ໄປເມືອງ ເຊເຄັມ ເພາະ ອິສຣາເອນ ທັງປວງໄດ້ມາ ເຊເຄັມ ເພື່ອຈະຕັ້ງພະ
ອົງໃຫ້ເປັນກະສັດ 2ແລະຢູ່ມາເມື່ອ ເຢໂຣໂບອາມ ລູກຊາຍ ເນບັດ ໄດ້ຍິນເລື່ອງນັ້ນ ເພາະເພິ່ນຍັງ
ຢູ່ໃນ ເອຢິບ ບ່ອນທີ່ເພິ່ນໜີຈາກພະພັກກະສັດ ໂຊໂລໂມນ ແລ້ວ ເຢໂຣໂບອາມ ກໍກັບຈາກ ເອຢິບ
3ພວກເຂົາທັງຫລາຍກໍໃຊ້ຄົນໄປຮຽນເຊີນເພິ່ນ ແລະ ເຢໂຣໂບອາມ ກັບ ອິສຣາເອນ ທັງໝົດໄດ້ມາ
ແລະທູນ ເຣໂຣໂບອາມ ວ່າ 4"ພໍ່ຂອງພະອົງໄດ້ເຮັດໃຫ້ແອກຂອງຂ້າພະອົງທຸກໜັກ ເພາະສະນັ້ນ
ບັດນີ້ຂໍຊົງຜ່ອນການບົວລະບັດຢ່າງທຸກໜັກຂອງພໍ່ຂອງພະອົງ ແລະແອກອັນໜັກຂອງພະອົງ
ເໜືອຂ້າພະອົງທັງຫລາຍໃຫ້ເບົາລົງ ແລະຂ້າພະອົງທັງຫລາຍຈະບົວລະບັດພະອົງ" 5ພະອົງ
ກ່າວກັບພວກເຂົາວ່າ "ຄົບສາມມື້ຈຶ່ງກັບມາຫາເຮົາອີກ" ປະຊາຊົນຈຶ່ງກັບໄປ
6ແລ້ວກະສັດ ເຣໂຣໂບອາມ ກໍຊົງປຶກສາກັບບັນດາຜູ້ເຖົ້າ ຜູ້ຢູ່ງານປະຈຳ ໂຊໂລໂມນ ພໍ່ຂອງພະ
ອົງ ຂະນະທີ່ພະອົງຍັງຊົງພະຊົນຢູ່ວ່າ "ທ່ານທັງຫລາຍຈະແນະນຳເຮົາໃຫ້ຕອບປະຊາຊົນນີ້
ຢ່າງໃດ" 7ພວກເຂົາທັງຫລາຍທູນພະອົງວ່າ "ຖ້າພະອົງຊົງເມດຕາແກ່ປະຊາຊົນນີ້ ແລະເຮັດ
ໃຫ້ພວກເຂົາພໍໃຈ ແລະກ່າວຕອບຄຳດີແກ່ພວກເຂົາ ພວກເຂົາກໍຈະເປັນຜູ້ຮັບໃຊ້ຂອງພະອົງ
ເປັນນິດ" 8ແຕ່ພະອົງຊົງປະຖິ້ມຄຳປຶກສາທີ່ຜູ້ເຖົ້າຖວາຍນັ້ນ ແລະໄປປຶກສາກັບຄົນໜຸ່ມ ຊຶ່ງເຕີບ

[ກ]1 ປະຫວັດກະສັດ 11:41-43 [ຂ]1 ປະຫວັດກະສັດ 12:1-15

ໃຫຍ່ຂຶ້ນມາພ້ອມກັບພະອົງ ແລະຢູ່ງານປະຈຳພະອົງ [9]ແລະພະອົງກ່າວກັບພວກເຂົາທັງຫລາຍ
ວ່າ “ທ່ານຈະແນະນຳເຮົາຢ່າງໃດ ເພື່ອພວກເຮົາຈະຕອບປະຊາຊົນນີ້ຜູ້ທີ່ທູນເຮົາວ່າ ‘ຂໍຊົງຜ່ອນ
ແອກທີ່ພໍ່ຂອງພະອົງວາງຢູ່ເໜືອຂ້າພະອົງທັງຫລາຍໃຫ້ເບົາລົງ’” [10]ແລະຄົນໜຸ່ມເຫລົ່ານັ້ນຜູ້ໄດ້
ເຕີບໃຫຍ່ມາພ້ອມກັບພຣະອົງທູນພະອົງວ່າ “ພຣະອົງຈົ່ງກ່າວດັ່ງນີ້ແກ່ປະຊາຊົນວ່າ ‘ນິ້ວກ້ອຍ
ຂອງເຮົາກໍໜັກກວ່າແອກ ແຫ່ງພໍ່ຂອງເຮົາ [11]ທີ່ພໍ່ຂອງເຮົາວາງແອກໜັກເທິງທ່ານທັງຫລາຍກໍດີ
ແລ້ວ ເຮົາຈະເພີ່ມແອກໃຫ້ແກ່ທ່ານທັງຫລາຍອີກ ພໍ່ຂອງເຮົາຕີສອນທ່ານທັງຫລາຍດ້ວຍໄມ້ແສ້
ແຕ່ເຮົາຈະຕີສອນທ່ານທັງຫລາຍດ້ວຍແສ້ແມງງອດ’”

## ເຢໂຣໂບອາມປົກຄອງເໜືອອິສຣາເອນ[ກ]

[12]ເຢໂຣໂບອາມ ກັບປະຊາຊົນທັງປວງຈຶ່ງເຂົ້າມາເຝົ້າ ເຣໂຣໂບອາມ ໃນມື້ທີສາມ ດັ່ງທີ່ກະສັດ
ໄດ້ຮັບສັ່ງ [13]ແລະກະສັດກ່າວຕອບພວກເຂົາຢ່າງເດັດຂາດ ພຣະອົງຊົງປະຖິ້ມຄຳປຶກສາຂອງຜູ້
ເຖົ້າ [14]ໂດຍກ່າວກັບພວກເຂົາຕາມຄຳແນະນຳຂອງພວກຄົນໜຸ່ມວ່າ “ພໍ່ຂອງເຮົາເຮັດແອກຂອງ
ທ່ານ ທັງຫລາຍໃຫ້ໜັກ ແຕ່ເຮົາຈະເພີ່ມໃຫ້ແກ່ແອກນັ້ນ ພໍ່ຂອງເຮົາຕີສອນທ່ານທັງຫລາຍດ້ວຍ
ໄມ້ແສ້ ແຕ່ເຮົາຈະຕີສອນທ່ານທັງຫລາຍດ້ວຍແສ້ແມງງອດ” [15]ກະສັດຈຶ່ງບໍ່ໄດ້ຊົງຟັງສຽງປະ-
ຊາຊົນ ເພາະເຫດການນີ້ເປັນມາແຕ່ພຣະເຈົ້າ ເພື່ອພຣະຜູ້ເປັນເຈົ້າຈະຊົງໃຫ້ ພຣະທຳຂອງ
ພຣະອົງໄດ້ສຳເລັດ ຊຶ່ງພຣະອົງກ່າວໂດຍອາຮີຢາຊາວຊີໂລ ແກ່ເຢໂຣໂບອາມ ລູກຊາຍ ເນບັດ
[16]ແລະ ເມື່ອ ອິສຣາເອນ ທັງປວງ ເຫັນວ່າກະສັດບໍ່ໄດ້ຊົງຟັງພວກເຂົາ ປະຊາຊົນກໍທູນຕອບ
ກະສັດວ່າ “ຂ້າພະອົງທັງຫລາຍມີສ່ວນຫຍັງໃນ ດາວິດ ຂ້າພະອົງທັງຫລາຍບໍ່ມີສ່ວນມໍລະດົກ
ໃນລູກ ເຢຊີ. ໂອ ອິສຣາເອນ ເອີຍ ກັບໄປເຕັນຂອງຕົນແຕ່ລະຄົນສາ ຂ້າແຕ່ດາວິດ ຈົ່ງເບິ່ງ-
ແຍງລາຊະວົງຂອງພະອົງເອງເຖີດ” ອິສຣາເອນທັງປວງຈຶ່ງກັບໄປໃນເຕັນຂອງໃຜລາວ [17]ແຕ່
ເຣໂຣໂບອາມ ຊົງປົກຄອງ ເໜືອປະຊາຊົນ ອິສຣາເອນ ຜູ້ອາໄສຢູ່ໃນຫົວເມືອງ ຢູດາ [18]ແລ້ວກະ-
ສັດ ເຣໂຣໂບອາມ ຊົງໃຊ້ ຮາໂດຣາມ ຄົນຄຸມແຮງງານໄປເກນຄົນ ແລະປະຊາຊົນ ອິສຣາເອນກໍ
ເອົາຫີນຄວ່າງເພິ່ນຈົນຕາຍ ແລ້ວກະສັດ ເຣໂຣໂບອາມກໍຊົງຮີບຂຶ້ນລົດຮົບຂອງພະອົງ ຊົງໜີໄປ
ເມືອງ ເຢຣູຊາເລັມ [19]ອິສຣາເອນຈຶ່ງກະບົດຕໍ່ລາຊະວົງຂອງ ດາວິດ ເຖິງທຸກມື້ນີ້

# ບົດທີ 11

## ພຣະເຈົ້າຊົງເຕືອນເຣໂຣໂບອາມບໍ່ໃຫ້ສູ້ຮົບກັບອິສຣາເອນສິບຕະກູນ

[1]ເມື່ອ ເຣໂຣໂບອາມ ມາເຖິງ ເມືອງ ເຢຣູຊາເລັມ ແລ້ວ ພະອົງໄດ້ຊົງລວບລວມເຊື້ອສາຍ ຢູດາ
ແລະ ເບັນຢາມິນ ເປັນນັກຮົບທີ່ຄັດເລືອກແລ້ວໜຶ່ງແສນແປດໝື່ນຄົນ ເພື່ອຈະສູ້ຮົບກັບ ອິສຣາ-
ເອນ ໝາຍຈະເອົາລາຊະອານາຈັກຄືນມາໃຫ້ແກ່ ເຣໂຣໂບອາມ [2]ແຕ່ພຣະທຳຂອງ ພຣະຜູ້ເປັນ-
ເຈົ້າ ມາເຖິງ ເຊມາຢາ ຄົນຂອງ ພຣະເຈົ້າ ວ່າ [3]“ຈົ່ງໄປທູນ ເຣໂຣໂບອາມ ລູກຊາຍຂອງ ໂຊໂລໂມນ
ກະສັດແຫ່ງ ຢູດາ ແລະບອກແກ່ອິສຣາເອນທັງປວງໃນ ຢູດາ ແລະ ເບັນຢາມິນ ວ່າ [4]‘ພຣະຜູ້-
ເປັນເຈົ້າກ່າວດັ່ງນີ້ວ່າ ເຈົ້າຢ່າຂຶ້ນໄປສູ້ຮົບກັບພີ່ນ້ອງຂອງເຈົ້າ ຈົ່ງກັບໄປເຮືອນຂອງຕົນທຸກຄົນ

[ກ]1 ປະຫວັດກະສັດ 12:16-24

ສາ ເພາະສິ່ງນີ້ເປັນມາຈາກເຮົາ” ເຫດສະນັ້ນ ພວກເຂົາຈຶ່ງເຊື່ອຟັງພຣະທຳຂອງ ພຣະຜູ້ເປັນ-
ເຈົ້າ ແລະກັບໄປ ບໍ່ໄດ້ສູ້ຮົບກັບ ເຢໂຣໂບອາມ

## ການສ້າງຫົວເມືອງເພື່ອປ້ອງກັນ

[5]ເຣໂຣໂບອາມ ປະທັບໃນເມືອງ ເຢຣູຊາເລັມ ແລະພະອົງຊົງສ້າງຫົວເມືອງເພື່ອປ້ອງກັນຢູດາ
[6]ພະອົງຊົງສ້າງເມືອງ ເບັດເລເຮັມ ເອຕາມ ເຕໂກອາ [7]ເບັດ-ຊູເຣ ໂສໂກ ອະດຸລາມ [8]ເມືອງ
ກັດ ມາເຣຊາ ແລະຊິເຟ [9]ອາໂດຣາຢິມ ລາກິດ ແລະອາເຊກາ [10]ໂຊຣາ ອາຢາໂລນ ແລະ
ເຮັບໂຣນ ຫົວເມືອງຊຶ່ງມີປ້ອມທີ່ຢູ່ໃນຢູດາ ແລະໃນເບັນຢາມິນ [11]ພະອົງຊົງສ້າງປ້ອມປ້ອງກັນ
ໃຫ້ແຂງແຮງ ແລະຕັ້ງຜູ້ບັງຄັບບັນຊາໃນປ້ອມເຫລົ່ານັ້ນ ແລະຊົງສະສົມອາຫານ ນ້ຳມັນ ແລະ
ນ້ຳອະງຸ່ນ [12]ພະອົງຊົງເກັບໂລ່ ແລະຫອກໄວ້ໃນຫົວເມືອງທັງປວງ ແລະເຮັດໃຫ້ຫົວເມືອງ
ເຫລົ່ານັ້ນແຂງແຮງຫລາຍ ພະອົງຈຶ່ງຊົງຍຶດຢູດາ ແລະເບັນຢາມິນໄວ້ໄດ້
[13]ແລະປະໂລຫິດກັບຄົນເລວີທີ່ຢູ່ໃນອິສຣາເອນທັງໝົດໄດ້ເຂົ້າມາຫາພະອົງຈາກເຂດແດນທີ່
ພວກເຂົາອາໄສຢູ່

## ເຢໂຣໂບອາມໄດ້ຂັບໄລ່ພວກປະໂລຫິດກັບຄົນເລວີອອກໄປ

[14]ເພາະຄົນເລວີປະຖິ້ມທົ່ງຫຍ້າ ແລະເຮືອນທີ່ພວກເຂົາຍຶດຖືເປັນກຳສິດ ແລະມາຢູດາ ກັບ
ເຢຣູຊາເລັມ ເພາະເຢໂຣໂບອາມ ແລະລູກຊາຍຂອງພະອົງໄດ້ຂັບໄລ່ພວກເຂົາອອກຈາກຕຳ-
ແໜ່ງປະໂລຫິດຂອງ ພຣະຜູ້ເປັນເຈົ້າ [15]ແລະພະອົງຊົງແຕ່ງຕັ້ງປະໂລຫິດຂອງພະອົງຂຶ້ນສຳລັບ
ປູຊະນີຍະສະຖານສູງທັງຫລາຍ ແລະສຳລັບຜີປີສາດ ແລະສຳລັບຮູບລູກງົວຊຶ່ງພະອົງຊົງສ້າງ
ຂຶ້ນ [16]ບັນດາຜູ້ທີ່ປັກໃຈສະແຫວງຫາ ພຣະຜູ້ເປັນເຈົ້າ ພຣະເຈົ້າຂອງ ອິສຣາເອນ ກໍຕິດຕາມ
ພວກເຂົາມາຈາກຕະກູນທັງປວງຂອງ ອິສຣາເອນ ໃນ ເຢຣູຊາເລັມ ເພື່ອຖວາຍສັດບູຊາຕໍ່ ພຣະ-
ຜູ້ເປັນເຈົ້າ ພຣະເຈົ້າ ແຫ່ງບັນພະບູລຸດຂອງພວກເຂົາ [17]ພວກເຂົາໄດ້ເສີມກຳລັງໃຫ້ລາຊະອາ-
ນາຈັກຂອງຢູດາ ແລະໄດ້ເຮັດໃຫ້ ເຣໂຣໂບອາມ ລູກຊາຍຂອງ ໂຊໂລໂມນ ເຂັ້ມແຂງຢູ່ໄດ້ສາມປີ
ເພາະພວກເຂົາດຳເນີນຢູ່ສາມປີໃນແບບວິຖີຊີວິດຂອງ ດາວິດ ແລະ ໂຊໂລໂມນ

## ລາຊະວົງຂອງເຣໂຣໂບອາມ

[18]ເຣໂຣໂບອາມ ຊົງຮັບ ເອົານາງ ມາຮາລາດ ທິດາຂອງ ເຢຣີໂມດ ລູກຊາຍຂອງ ດາວິດ ມາ
ເປັນມະເຫສີຜູ້ເປັນທິດາຂອງ ອາບີຮາຍ ລູກສາວຂອງ ເອລີອາບ ລູກຊາຍ ເຢຊີ [19]ແລະພະນາງກໍ
ປະສູດລູກຊາຍໃຫ້ພະອົງຄື ເຢອຸດ ເຊມາຣີຢາ ແລະຊາຮຳ [20]ພາຍຫລັງພະອົງກໍຊົງຮັບ ມາ-
ອາກາ ທິດາຂອງອັບຊາໂລມ ຜູ້ຊຶ່ງປະສູດ ອາບີຢາ ອາດຕາຍ ຊີຊາ ແລະ ເຊໂລມິດ ໃຫ້ພະ
ອົງ [21]ເຣໂຣໂບອາມ ຊົງຮັກ ມາອາກາ ທິດາຂອງ ອັບຊາໂລມ ຫລາຍກວ່າມະເຫສີ ແລະນາງສະ-
ໜົມຂອງພະອົງທັງໝົດ (ພະອົງມີມະເຫສີສິບແປດອົງ ແລະນາງສະໜົມຫົກສິບຄົນ ແລະໃຫ້
ກຳເນີດລູກຊາຍຊາວແປດອົງ ແລະທິດາຫົກສິບອົງ)
[22]ແລະ ເຣໂຣໂບອາມ ຊົງ ແຕ່ງຕັ້ງ ໃຫ້ ອາບີຢາ ລູກຊາຍຂອງ ມາອາກາ ເປັນລູກຊາຍອົງໃຫຍ່
ໃຫ້ ເປັນຫົວໜ້າທ່າມກາງພີ່ນ້ອງຂອງຕົນ ເພາະພະອົງຊົງຕັ້ງພະໄທຈະໃຫ້ເພິ່ນ ເປັນກະສັດ
[23]ພະອົງຊົງຈັດການຢ່າງສະຫລາດ ແລະແຈກຢາຍບັນດາລູກຊາຍຂອງພະອົງໄປທົ່ວແຜ່ນດິນ

ທັງໝົດຂອງ ຢູດາ ແລະ ເບັນຢາມິນ ໃນຫົວເມືອງທີ່ມີປ້ອມທັງໝົດ ພະອົງປະທານສະບຽງອາ-
ຫານໃຫ້ຢ່າງອຸດົມສົມບູນ ແລະຊົງມີມະເຫສີຢ່າງຫລວງຫລາຍ

# ບົດທີ 12

## ເຣໂຮໂບອາມຊົງປະຖິ້ມພຣະເຈົ້າ[ກ]

1ຕໍ່ມາເມື່ອລາຊະອານາຈັກຂອງ ເຣໂຮໂບອາມ ຕັ້ງໝັ້ນຄົງ ແລະແຂງແຮງແລ້ວ ພະອົງຊົງປະ
ຖິ້ມພຣະບັນຍັດຂອງ ພຣະຜູ້ເປັນເຈົ້າ ເສຍ ແລະ ອິສຣາເອນ ທັງປວງກໍປະຖິ້ມພ້ອມກັບພະອົງ
ດ້ວຍ

## ຊີຊາກກະສັດແຫ່ງເອຢິບບຸກລຸກເມືອງເຢຣູຊາເລັມ[ຂ]

2ຢູ່ມາໃນປີທີຫ້າຂອງກະສັດ ເຣໂຮໂບອາມ ເພາະພວກເຂົາບໍ່ສັດຊື່ຕໍ່ ພຣະຜູ້ເປັນເຈົ້າ ຊີຊາກ
ກະສັດ ແຫ່ງ ເອຢິບ ສະເດັດຂຶ້ນມາສູ້ຮົບກັບ ເຢຣູຊາເລັມ 3ມີລົດຮົບໜຶ່ງພັນສອງຮ້ອຍຄັນ ແລະ
ພົນທະຫານມ້າຫົກໝື່ນຄົນ ແລະພົນຜູ້ມາກັບພະອົງຈາກ ເອຢິບ ນັບບໍ່ຖ້ວນຄື ຊາວ ລີເບຍ ຄົນ
ສຸກກີ ແລະຄົນ ເອທີໂອເປຍ 4ພະອົງຊົງຍຶດຫົວເມືອງທີ່ມີປ້ອມຂອງ ຢູດາ ແລະກັບມາຍັງ ເຢຣູ-
ຊາເລັມ

5ແລ້ວ ເຊມາຢາ ຜູ້ທຳນວາຍ ໄດ້ມາເຝົ້າ ເຣໂຮໂບອາມ ແລະບັນດາ ເຈົ້ານາຍ ແຫ່ງ ຢູດາ ຜູ້ມາ
ປະຊຸມກັນຢູ່ທີ່ ເຢຣູຊາເລັມ ດ້ວຍເລື່ອງ ຊີຊາກ ແລ້ວກ່າວ ແກ່ພວກເຂົາທັງຫລາຍວ່າ “ພຣະຜູ້-
ເປັນເຈົ້າກ່າວດັ່ງນີ້ວ່າ ເຈົ້າໄດ້ປະຖິ້ມເຮົາ ເຮົາຈຶ່ງໄດ້ປະຖິ້ມເຈົ້າໃຫ້ຢູ່ໃນມືຂອງ ຊີຊາກ” 6ແລ້ວ
ເຈົ້ານາຍ ແຫ່ງ ອິສຣາເອນ ແລະກະສັດໄດ້ຖ່ອມຕົວລົງ ກ່າວວ່າ “ພຣະຜູ້ເປັນເຈົ້າຊົງຊອບທຳ
ແລ້ວ” 7ເມື່ອ ພຣະຜູ້ເປັນເຈົ້າ ຊົງ ເຫັນວ່າພວກເຂົາຖ່ອມຕົວລົງ ພຣະທຳຂອງ ພຣະຜູ້ເປັນເຈົ້າ ໄດ້
ມາເຖິງ ເຊມາຢາ ວ່າ “ເຂົາທັງຫລາຍໄດ້ຖ່ອມຕົວລົງແລ້ວ ເຮົາຈຶ່ງຈະບໍ່ທຳລາຍພວກເຂົາ ແຕ່
ເຮົາຈະຊ່ວຍ ເຂົາໃຫ້ພົ້ນ ແລະພຣະພິໂລດຂອງ ເຮົາຈະບໍ່ຖອກລົງມາ ເໜືອ ເຢຣູຊາເລັມ ໂດຍມື
ຂອງ ຊີຊາກ 8ຢ່າງໃດກໍດີ ພວກເຂົາຕ້ອງເປັນຜູ້ຮັບໃຊ້ຂອງ ຊີຊາກ ເພື່ອພວກເຂົາຈະໄດ້ຮູ້
ຄວາມແຕກຕ່າງລະຫວ່າງການຮັບໃຊ້ເຮົາ ແລະຮັບໃຊ້ລາຊະອານາຈັກທັງຫລາຍຂອງແຜ່ນດິນ
ໂລກ”

9ຊີຊາກ ກະສັດ ແຫ່ງ ເອຢິບ ຈຶ່ງຂຶ້ນມາຕໍ່ສູ້ ເຢຣູຊາເລັມ ພະອົງຊົງ ເກັບ ເອົາຊັບສິນ ແຫ່ງພຣະວິ-
ຫານຂອງ ພຣະຜູ້ເປັນເຈົ້າ ແລະຊັບສົມບັດໃນພະລາຊະວັງ ພະອົງຊົງ ເກັບເອົາໄປທຸກຢ່າງຊົງ
ເກັບ ເອົາ ໂລ່ຄຳທີ່ ໄຊໂລໂມນ ຊົງສ້າງ ໄວ້ນັ້ນ ໄປນຳ 10ກະສັດ ເຣໂຮໂບອາມ ຊົງ ເຮັດ ໂລ່ທອງ-
ເຫລືອງຂຶ້ນແທນ ແລະໄດ້ມອບໄວ້ໃນມືຂອງທະຫານຮັກສາພະອົງ ຜູ້ເຝົ້າພະລາຊະວັງ 11ແລະ
ກະສັດສະເດັດເຂົ້າໄປໃນພຣະວິຫານຂອງ ພຣະຜູ້ເປັນເຈົ້າ ເມື່ອໃດ ທະຫານຮັກສາພະອົງກໍມາຖື
ໂລ່ນັ້ນ ແລ້ວນຳກັບໄປເກັບໄວ້ໃນຫ້ອງທະຫານຮັກສາພະອົງຕາມເດີມ

12ເມື່ອພະອົງຊົງຖ່ອມພະອົງລົງ ພຣະພິໂລດຂອງ ພຣະຜູ້ເປັນເຈົ້າກໍຫັນໄປຈາກພະອົງ ບໍ່ໄດ້
ທຳລາຍພະອົງຈົນໝົດສິ້ນ ຫລາຍກວ່ານັ້ນອີກ ສະພາບການກໍຍັງດີຢູ່ໃນ ຢູດາ

---

[ກ]1 ປະຫວັດກະສັດ 14:21-24 [ຂ]1 ປະຫວັດກະສັດ 14:25-28

## ການສິ້ນພະຊົນຂອງເຣໂຮໂບອາມ[ກ]

13ກະສັດ ເຣໂຮໂບອາມ ຈຶ່ງສະຖາປະນາພະອົງຂຶ້ນໃນ ເມືອງ ເຢຣູຊາເລັມ ແລະຊົງປົກຄອງ
ເມື່ອ ເຣໂຮໂບອາມ ຊົງເລີ່ມປົກຄອງນັ້ນ ເພິ່ນມີອາຍຸສີ່ສິບເອັດປີ ແລະພະອົງຊົງປົກຄອງສິບເຈັດ
ປີໃນເມືອງ ເຢຣູຊາເລັມ ອັນເປັນເມືອງຊຶ່ງ ພຣະຜູ້ເປັນເຈົ້າ ຊົງເລືອກໄວ້ຈາກຕະກູນຕ່າງ ໆຂອງ
ອິສຣາເອນ ເພື່ອຈະຕັ້ງພຣະນາມຂອງພຣະອົງໄວ້ບ່ອນນັ້ນ ແມ່ຂອງພະອົງຊົງພະນາມວ່າ ນາ-
ອາມາ ຄົນ ອຳໂມນ 14ແລະພະອົງໄດ້ຊົງກະທຳການຊົ່ວຮ້າຍ ເພາະພະອົງບໍ່ຕັ້ງພະໄທທີ່ຈະສະ-
ແຫວງຫາ ພຣະຜູ້ເປັນເຈົ້າ

15ສ່ວນພະລາຊະກິດຂອງ ເຣໂຮໂບອາມ ຕັ້ງແຕ່ຕົ້ນຈົນສຸດທ້າຍ ກໍໄດ້ບັນທຶກໄວ້ໃນໜັງສື
ຂອງ ເຊມາຢາ ຜູ້ທຳນວາຍ ແລະຂອງ ອິດໂດ ຜູ້ທຳນວາຍຕາມແບບພົງສາວະດານ (ຂ່າວຄາວ)
ເຣໂຮໂບອາມ ແລະ ເຢໂຣໂບອາມ ເຮັດສົງຄາມກັນມາຕະຫລອດ 16ແລະ ເຣໂຮໂບອາມ ກໍລ່ວງ
ລັບໄປຢູ່ກັບບັນພະບູລຸດຂອງພະອົງ ພວກເຂົາກໍຝັງພະສົບໄວ້ໃນນະຄອນ ດາວິດ ແລະ ອາບີຢາ
ລູກຊາຍຂອງພະອົງໄດ້ຂຶ້ນປົກຄອງແທນພະອົງ

# ບົດທີ 13

## ອາບີຢາປົກຄອງເໜືອຢູດາ[ຂ]

1ໃນປີທີສິບແປດແຫ່ງລາຊະການຂອງກະສັດ ເຢໂຣໂບອາມ ອາບີຢາ ໄດ້ເລີ່ມປົກຄອງ ເໜືອ
ປະເທດ ຢູດາ 2ພະອົງຊົງປົກຄອງໃນ ເຢຣູຊາເລັມ ສາມປີ ແມ່ຂອງພະອົງມີພະນາມວ່າ ມີກາຢາ
ລູກສາວຂອງ ອຸຣີເອນ ແຫ່ງ ກີເບອາ ມີສົງຄາມລະຫວ່າງ ອາບີຢາ ແລະ ເຢໂຣໂບອາມ 3ອາບີ-
ຢາ ສະເດັດອອກເຮັດສົງຄາມ ມີກອງທັບທະຫານຊຳນານເສິກເປັນຄົນຄັດເລືອກແລ້ວສີ່ແສນຄົນ
ແລະ ເຢໂຣໂບອາມ ໄດ້ຕັ້ງ ແນວຮົບສູ້ກັບພະອົງດ້ວຍຄົນທີ່ຖືກຄັດ ເລືອກແລ້ວ ເປັນທະຫານ ແປດ
ແສນຄົນ

4ແລະ ອາບີຢາ ຊົງລຸກຢືນຢູ່ ເທິງພູເຂົາ ເຊມາຣາຢິມ ຊຶ່ງຢູ່ໃນພູເຂົາ ເອຟຣາຢິມ ແລະກ່າວວ່າ
“ຂ້າແດ່ ເຢໂຣໂບອາມ ແລະ ອິສຣາເອນທັງປວງ ຂໍຟັງຂ້າພະເຈົ້າ 5ບໍ່ຄວນຫລືທີ່ທ່ານທັງຫລາຍ
ຈະຮູ້ວ່າ ພຣະຜູ້ເປັນເຈົ້າ ພຣະເຈົ້າ ແຫ່ງ ອິສຣາເອນ ພຣະລາຊະທານຕຳແໜ່ງກະສັດ ເໜືອ ອິ-
ສຣາເອນ ເປັນນິດ ແກ່ ດາວິດ ແລະລູກຫລານຂອງພະອົງ ໂດຍຄຳໝັ້ນສັນຍາແຫ່ງ ເກືອ 6ເຖິງ
ປານນັ້ນ ເຢໂຣໂບອາມ ລູກຊາຍ ເນບັດ ຂ້າລາຊະການຂອງ ໂຊໂລໂມນ ລູກຊາຍຂອງ ດາວິດ ໄດ້
ລຸກຂຶ້ນກະບົດຕໍ່ເຈົ້ານາຍຂອງຕົນ 7ແລະມີຄົນຖ່ອຍຄົນອັນທະພານບາງຄົນມົ້ວສຸມກັນກັບລາວ
ແລະຂານສູ້ກັບ ເຣໂຮໂບອາມ ລູກຊາຍຂອງ ໂຊໂລໂມນ ເມື່ອ ເຣໂຮໂບອາມ ຍັງນ້ອຍຢູ່ ແລະໃຈ
ອ່ອນແອຕ້ານທານກໍບໍ່ໄຫວ 8ແລະບັດນີ້ ທ່ານຄິດວ່າຈະຕໍ່ຕ້ານລາຊະອານາຈັກຂອງ ພຣະຜູ້-
ເປັນເຈົ້າ ທີ່ຢູ່ໃນມືລູກຫລານຂອງ ດາວິດ ເພາະທ່ານທັງຫລາຍເປັນຄົນໝູ່ໃຫຍ່ ແລະມີພະເປັນ
ລູກງົວຄຳທີ່ ເຢໂຣໂບອາມ ສ້າງໄວ້ໃຫ້ທ່ານ 9ທ່ານທັງຫລາຍໄດ້ຂັບໄລ່ປະໂລຫິດຂອງ ພຣະຜູ້-
ເປັນເຈົ້າ ລູກຫລານຂອງ ອາໂຣນ ແລະຄົນ ເລວີ ອອກໄປ ແລະ ຕັ້ງປະໂລຫິດສຳລັບຕົນເອງ

---

[ກ]1 ປະຫວັດກະສັດ 14:31 [ຂ]1 ປະຫວັດກະສັດ 15:12

ຄືຊົນຊາດທັງຫລາຍຫລື ຜູ້ໃດທີ່ນຳງົວໜຸ່ມ ແລະແກະຜູ້ເຈັດໂຕມາຊຳລະຕົວໃຫ້ບໍລິສຸດໄວ້ ຈະ
ໄດ້ເປັນປະໂລຫິດຂອງສິ່ງທີ່ບໍ່ແມ່ນພະແທ້ [10]ແຕ່ສຳລັບເຮົາທັງຫລາຍ ພຣະຜູ້ເປັນເຈົ້າຊົງເປັນ
ພຣະເຈົ້າຂອງເຮົາທັງຫລາຍ ແລະເຮົາທັງຫລາຍບໍ່ໄດ້ປະຖິ້ມພຣະອົງ ເຮົາມີປະໂລຫິດຜູ້ບົວ-
ລະບັດ ພຣະຜູ້ເປັນເຈົ້າ ເປັນລູກຫລານຂອງ ອາໂຣນ ທັງມີຄົນ ເລວີ ເຮັດວຽກໜ້າທີ່ຂອງພວກເຂົາ
[11]ພວກເຂົາຖວາຍເຄື່ອງເຜົາບູຊາແດ່ພຣະຜູ້ເປັນເຈົ້າທຸກເຊົ້າທຸກແລງ ທັງເຄື່ອງຫອມ ທັງເຂົ້າຈີ່
ຕໍ່ໜ້າພຣະພັກເທິງ ໂຕະບໍລິສຸດ ແລະເບິ່ງແຍງຄັນຕະກຽງຄຳ ພ້ອມທັງຕະກຽງ ເພື່ອໃຫ້ຕະ-
ກຽງລຸກຢູ່ທຸກແລງ ເພາະເຮົາໄດ້ຮັກສາພຣະບັນຊາຂອງພຣະຜູ້ເປັນເຈົ້າພຣະເຈົ້າຂອງເຮົາ ແຕ່
ທ່ານໄດ້ປະຖິ້ມພຣະອົງເສຍ [12]ແລະເບິ່ງແມ ພຣະເຈົ້າຊົງຢູ່ກັບເຮົາ ຊົງເປັນຜູ້ບັງຄັບບັນຊາ
ຂອງເຮົາ ແລະປະໂລຫິດຂອງພຣະອົງກັບແກເສິກພ້ອມທີ່ຈະເປົ່າເອີ້ນເຮັດສົງຄາມຕໍ່ສູ້ກັບທ່ານ
ປະຊາຊົນ ອິສຣາເອນ ເອີຍ ຂໍຢ່າຕໍ່ສູ້ກັບ ພຣະຜູ້ເປັນເຈົ້າ ພຣະເຈົ້າ ແຫ່ງບັນພະບູລຸດຂອງທ່ານ
ເພາະທ່ານຈະບໍ່ ຊະນະເລີຍ”

[13]ເຢໂຣໂບອາມ ໄດ້ສັບຊ້ອນດັກຊຸ້ມຜູ້ຄົນໄວ້ເພື່ອຈະອ້ອມມາຫາພວກເຂົາຈາກເບື້ອງຫລັງ
ດັ່ງນັ້ນ ກອງທະຫານຂອງພະອົງກໍຢູ່ຕໍ່ໜ້າຢູດາ ແລະກອງຊຸ້ມກໍຢູ່ຂ້າງຫລັງພວກເຂົາ [14]ແລະ
ເມື່ອຢູດາຫລຽວເບິ່ງຫລັງ ການເສິກກໍຢູ່ຂ້າງໜ້າແລະຂ້າງຫລັງພວກເຂົາ ແລະພວກເຂົາທັງ-
ຫລາຍກໍຮ້ອງທູນຕໍ່ພຣະຜູ້ເປັນເຈົ້າ ແລະບັນດາປະໂລຫິດກໍເປົ່າແກ [15]ແລ້ວຄົນຂອງຢູດາກໍ
ເປັ່ງສຽງຮ້ອງທຳນອງເສິກ ແລະເມື່ອຄົນຢູດາຮ້ອງຂຶ້ນ ຢູ່ມາພຣະເຈົ້າຊົງໃຫ້ເຢໂຣໂບອາມ
ແລະອິສຣາເອນທັງປວງພ່າຍແພ້ໄປຕໍ່ອາບີຢາ ແລະຢູດາ [16]ຄົນອິສຣາເອນໄດ້ໜີໄປຕໍ່ໜ້າຢູ-
ດາ ແລະພຣະເຈົ້າຊົງມອບພວກເຂົາໄວ້ໃນມືຂອງອາບີຢາ [17]ອາບີຢາ ແລະປະຊາຊົນຂອງພະ
ອົງກໍຂ້າພວກເຂົາຢ່າງຫລວງຫລາຍ ຄົນອິສຣາເອນທີ່ຄັດເລືອກແລ້ວຈຶ່ງລົ້ມຕາຍຫ້າແສນຄົນ
[18]ນີ້ແຫລະ ຄົນອິສຣາເອນທີ່ຖືກປາບປາມໃນເທື່ອນັ້ນ ແລະຄົນຢູດາກໍຊະນະ ເພາະພວກເຂົາ
ເພິ່ງພຣະເຈົ້າ ແຫ່ງບັນພະບູລຸດຂອງພວກເຂົາ

[19]ອາບີຢາໄດ້ຕິດຕາມເຢໂຣໂບອາມ ແລະຍຶດເອົາຫົວເມືອງຈາກພະອົງ ຄືເມືອງເບັດເອນ
ກັບຊົນນະບົດຂອງເມືອງນັ້ນ ແລະເຢຊານາກັບຊົນນະບົດຂອງເມືອງນັ້ນ ແລະເອຟະໂຣນກັບ
ຊົນນະບົດຂອງເມືອງນັ້ນ

## ການສິ້ນພະຊົນຂອງເຢໂຣໂບອາມ[ກ]

[20]ເຢໂຣໂບອາມບໍ່ໄດ້ຟື້ນອຳນາດຂອງພະອົງໃນລາຊະການຂອງອາບີຢາ ແລະພຣະຜູ້ເປັນ-
ເຈົ້າຊົງປະຫານພະອົງໃຫ້ສິ້ນພະຊົນເສຍ

## ຄອບຄົວຂອງອາບີຢາ

[21]ຝ່າຍອາບີຢາກໍມີອຳນາດຫລາຍຂຶ້ນ ແລະມີມະເຫສີສິບສີ່ອົງ ໃຫ້ກຳເນີດລູກຊາຍຊາວສອງ
ອົງ ແລະລູກສາວສິບຫົກອົງ

[22]ລາຊະກິດນອກນັ້ນຂອງອາບີຢາ ວິທີການ ແລະພະດຳລັດຂອງພະອົງໄດ້ບັນທຶກໄວ້ໃນ
ໜັງສືຂອງຜູ້ທຳນວາຍອິດໂດ

[ກ]1 ປະຫວັດກະສັດ 14:19-20 [ຂ]1 ປະຫວັດກະສັດ 15:7-10 [ຄ]2 ຂ່າວຄາວ 16:8

# ບົດທີ 14

## ການສິ້ນພະຊົນຂອງອາບີຢາ ແລະ ອາຊາຂຶ້ນປົກຄອງແທນ[ຊ]

1ອາບີຢາ ຈຶ່ງລ່ວງລັບໄປຢູ່ກັບບັນພະບູລຸດຂອງພະອົງ ພວກເຂົາກໍຝັງພະສົບໄວ້ໃນນະຄອນ
ດາວິດ ແລະ ອາຊາ ລູກຊາຍຂອງພະອົງໄດ້ຂຶ້ນປົກຄອງ ແທນພະອົງ ໃນລາຊະການຂອງ ອາຊາ
ແຜ່ນດິນໄດ້ສະຫງົບຢູ່ສິບປີ
2ແລະ ອາຊາ ຊົງກະທຳສິ່ງທີ່ດີ ແລະເປັນທີ່ຊອບໃນສາຍພຣະເນດ ພຣະຜູ້ເປັນເຈົ້າ ພຣະເຈົ້າ
ຂອງພະອົງ 3ພະອົງຊົງກຳຈັດ ແທ່ນບູຊາພະຕ່າງດ້າວ ແລະປູຊະນີຍະສະຖານສູງທັງຫລາຍ
ມ້າງເສົາສັກສິດລົງ ແລະໄດ້ລົ້ມເສົາຮູບເຄົາລົບເສຍ 4ຊົງບັນຊາໃຫ້ຢູດາ ສະແຫວງຫາ ພຣະຜູ້-
ເປັນເຈົ້າ ພຣະເຈົ້າ ແຫ່ງບັນພະບູລຸດຂອງຕົນ ແລະໃຫ້ຮັກສາກົດໝາຍກັບພຣະບັນຍັດ 5ພະອົງ
ຊົງກຳຈັດປູຊະນີຍະສະຖານສູງ ແລະແທ່ນເຄື່ອງຫອມອອກໄປຈາກຫົວເມືອງທັງໝົດຂອງຢູດາ
ນຳ ແລະລາຊະອານາຈັກກໍໄດ້ສະຫງົບຢູ່ພາຍໃຕ້ພະອົງ
6ພະອົງຊົງສ້າງຫົວເມືອງທີ່ມີປ້ອມໃນຢູດາ ເພາະແຜ່ນດິນກໍສະຫງົບ ພະອົງບໍ່ໄດ້ເຮັດສົງ-
ຄາມໃນປີເຫລົ່ານັ້ນ ເພາະ ພຣະຜູ້ເປັນເຈົ້າ ຊົງປະທານຄວາມສະຫງົບແກ່ພະອົງ 7ແລະພະອົງ
ກ່າວກັບຢູດາວ່າ "ໃຫ້ເຮົາທັງຫລາຍສ້າງຫົວເມືອງເຫລົ່ານີ້ ອ້ອມດ້ວຍກຳແພງ ຫໍຄອຍ ປະຕູ
ເມືອງ ແລະດ່ານ ແຜ່ນດິນຍັງເປັນຂອງເຮົາ ເພາະເຮົາໄດ້ສະແຫວງຫາ ພຣະຜູ້ເປັນເຈົ້າ ພຣະ-
ເຈົ້າ ຂອງເຮົາ ເຮົາໄດ້ສະແຫວງຫາພະອົງ ແລະພຣະອົງໄດ້ຊົງປະທານຄວາມສະຫງົບສຸກທຸກ
ດ້ານ" ພວກເຂົາທັງຫລາຍຈຶ່ງສ້າງສາ ແລະຈະເລີນຂຶ້ນ
8ອາຊາ ຊົງມີກອງທັບດ້ວຍໂລ່ໃຫຍ່ ແລະຫອກຈາກຢູດາ ສາມແສນຄົນ ແລະຈາກ ເບັນຢາ-
ມິນ ຊຶ່ງຖືໂລ່ແລະທະນູສອງແສນແປດໝື່ນຄົນ ທັງໝົດເປັນທະຫານເອກ

## ການຊະນະຍິ່ງໃຫຍ່ຂອງອາຊາເໜືອເຊລາ[ຄ]

9ເຊຣາ ຊາວ ເອທີໂອເປຍ ໄດ້ອອກມາຕໍ່ສູ້ກັບພວກເຂົາດ້ວຍກອງທັບໜຶ່ງລ້ານຄົນ ແລະລົດຮົບ
ສາມຮ້ອຍຄັນມາຮອດ ເມືອງ ມາເຣຊາ 10ແລະ ອາຊາ ຊົງຍົກອອກໄປປະທະກັບພວກເຂົາ ແລະ
ພວກເຂົາທັງຫລາຍກໍຕັ້ງແນວຮົບໃນພູເຂົາ ເຊຟາທາ ທີ່ ມາເຣຊາ
11ອາຊາ ຮ້ອງທູນຕໍ່ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງພະອົງວ່າ "ຂ້າແດ່ ພຣະຜູ້ເປັນເຈົ້າ ບໍ່ມີຜູ້
ໃດຊ່ວຍໄດ້ຢ່າງພຣະອົງ ໃນການສູ້ຮົບກັນລະຫວ່າງຜູ້ທີ່ມີກຳລັງກັບຜູ້ທີ່ບໍ່ມີກຳລັງ ຂ້າແດ່ ພຣະ-
ຜູ້ເປັນເຈົ້າ ພຣະເຈົ້າ ຂອງຂ້າພະອົງທັງຫລາຍ ຂໍຊົງຊ່ວຍພວກຂ້າພະອົງ ເພາະຂ້າພະອົງທັງ-
ຫລາຍ ເພິ່ງພຣະອົງ ຂ້າພະອົງມາຕໍ່ສູ້ກັບຄົນໝູ່ໃຫຍ່ນີ້ໃນພຣະນາມຂອງພຣະອົງ ຂ້າແດ່ ພຣະ-
ຜູ້ເປັນເຈົ້າ ພຣະອົງຊົງ ເປັນ ພຣະເຈົ້າ ຂອງຂ້າພຣະອົງທັງຫລາຍ ຂໍຢ່າໃຫ້ມະນຸດຊະນະພຣະ-
ອົງ" 12ພຣະຜູ້ເປັນເຈົ້າ ຈຶ່ງຊົງໃຫ້ຊາວ ເອທີໂອເປຍ ພ່າຍແພ້ຕໍ່ ອາຊາ ແລະຕໍ່ ຢູດາ ແລະຊາວ
ເອທີໂອເປຍ ກໍໜີໄປ 13ອາຊາ ແລະທະຫານທີ່ຢູ່ກັບພະອົງກໍໄລ່ຕາມພວກເຂົາໄປເຖິງ ເມືອງ
ເກຣາ ແລະຊາວ ເອທີໂອເປຍ ລົ້ມ ຕາຍຫລາຍຈົນບໍ່ເຫລືອຈັກຊີວິດດຽວ ເພາະພວກເຂົາໄດ້
ແຕກພ່າຍຕໍ່ພຣະພັກ ພຣະຜູ້ເປັນເຈົ້າ ແລະກອງທັບຂອງພຣະອົງ ຄົນ ຢູດາ ເກັບຂອງທີ່ຍຶດໄດ້
ຢ່າງຫລວງຫລາຍ 14ພວກ ເຂົາຍັງ ໂຈມຕີບັນດາຫົວ ເມືອງຮອບ ເມືອງ ເກຣາ ເພາະວ່າຄວາມ

ຍ້ານກົວຕໍ່ພຣະຜູ້ເປັນເຈົ້າໄດ້ມາເຖິງພວກເຂົາ ພວກເຂົາໄດ້ປຸ້ນທົ່ວເມືອງທັງໝົດ ເພາະມີສິ່ງ
ຂອງທີ່ຍຶດໄດ້ໃນນັ້ນຫລາຍ 15ພວກເຂົາໄດ້ໂຈມຕີເຕັນຂອງຜູ້ທີ່ມີງົວ ແລະເອົາແກະໄປຢ່າງ
ຫລວງຫລາຍ ແລະອູດດ້ວຍ ແລ້ວພວກເຂົາກໍກັບໄປເຢຣູຊາເລັມ

## ບົດທີ 15

### ຜູ້ທຳນວາຍອາຊາຣີຢາເຕືອນອາຊາ

1ພຣະວິນຍານ ຂອງ ພຣະເຈົ້າ ສະເດັດມາສະຖິດກັບ ອາຊາຣີຢາ ລູກຊາຍ ໂອເດັດ 2ເພິ່ນຈຶ່ງ
ອອກໄປເຝົ້າອາຊາທູນພະອົງວ່າ "ຂ້າແດ່ອາຊາ ແລະຢູດາ ກັບເບັນຢາມິນທັງປວງ ຂໍຈົ່ງຟັງ
ຂ້າພະເຈົ້າ ພຣະຜູ້ເປັນເຈົ້າຊົງສະຖິດກັບທ່ານທັງຫລາຍ ກໍຕໍ່ເມື່ອທ່ານທັງຫລາຍຢູ່ກັບພຣະອົງ
ຖ້າທ່ານທັງຫລາຍສະແຫວງຫາພຣະອົງ ທ່ານກໍຈະພົບພຣະອົງ ແຕ່ຖ້າທ່ານທັງຫລາຍປະຖິ້ມ
ພຣະອົງ ພຣະອົງຈະຊົງປະຖິ້ມທ່ານທັງຫລາຍ 3ອິສຣາເອນຢູ່ໂດຍປາດສະຈາກພຣະເຈົ້າອົງ
ທ່ຽງແທ້ເປັນເວລາດົນ ແລະບໍ່ມີປະໂລຫິດຜູ້ສັ່ງສອນ ແລະບໍ່ມີກົດໝາຍ 4ແຕ່ເມື່ອເຖິງຄາວ
ພວກເຂົາທຸກຍາກລຳບາກ ພວກເຂົາຫັນມາຫາພຣະຜູ້ເປັນເຈົ້າ ພຣະເຈົ້າ ແຫ່ງ ອິສຣາເອນ
ແລະສະແຫວງຫາພຣະອົງ ພວກເຂົາທັງຫລາຍກໍພົບພຣະອົງ 5ໃນສະໄໝນັ້ນບໍ່ມີສັນຕິພາບແກ່
ຜູ້ທີ່ອອກໄປ ຫລືຜູ້ທີ່ເຂົ້າມາ ເພາະມີການວຸ້ນວາຍລົບກວນຊາວເມືອງທັງຫລາຍນັ້ນ 6ພວກເຂົາ
ແຕກແຍກກັນເປັນພວກໆ ປະຊາຊາດຕໍ່ປະຊາຊາດແລະເມືອງຕໍ່ເມືອງ ເພາະພຣະເຈົ້າຊົງລົບ
ກວນພວກເຂົາດ້ວຍຄວາມທຸກຍາກລຳບາກ 7ແຕ່ທ່ານທັງຫລາຍຈົ່ງກ້າຫານ ຢ່າໃຫ້ມືຂອງທ່ານ
ອ່ອນລົງ ເພາະວ່າກິດຈະການຂອງທ່ານຈະໄດ້ຮັບບຳເໜັດ"

### ອາຊາໄດ້ນຳເອົາການແກ້ໄຂໃໝ່ ແລະການຟື້ນຟູໃໝ່ມາສູ່ປະເທດ

8ເມື່ອອາຊາຊົງຮັບຟັງຖ້ອຍຄຳເຫລົ່ານີ້ ຄືຄຳທຳນວາຍຂອງໂອເດັດຜູ້ທຳນວາຍ ພະອົງກໍຊົງ
ມີພະໄທກ້າຂຶ້ນ ຊົງກຳຈັດສິ່ງທີ່ໜ້າກຽດຊັງຈາກແຜ່ນດິນຢູດາ ແລະ ເບັນຢາມິນ ຈົນໝົດ ແລະ
ຈາກທົ່ວເມືອງຊຶ່ງພະອົງຍຶດມາໄດ້ຈາກພູເຂົາ ເອຟຣາຢິມ ແລະພະອົງຊົງສ້ອມແປງແທ່ນບູຊາ
ຂອງພຣະຜູ້ເປັນເຈົ້າ ຊຶ່ງຢູ່ຕໍ່ໜ້າລະບຽງພຣະວິຫານຂອງພຣະຜູ້ເປັນເຈົ້າ

9ພະອົງຊົງຮວບຮວມຢູດາ ແລະ ເບັນຢາມິນທັງປວງ ແລະຄົນເຫລົ່ານັ້ນຈາກເອຟຣາຢິມ
ມານາເຊ ແລະຈາກຊີເມໂອນ ຜູ້ອາໄສຢູ່ກັບພວກເຂົາທັງຫລາຍ ເພາະຄົນເປັນຈຳນວນຫລາຍ
ໄດ້ຫລົບໜີມາຫາພະອົງຈາກອິສຣາເອນ ເມື່ອພວກເຂົາເຫັນວ່າພຣະຜູ້ເປັນເຈົ້າພຣະເຈົ້າຂອງ
ພະອົງສະຖິດຢູ່ກັບພະອົງ 10ພວກເຂົາຊຸມນຸມກັນທີ່ ເຢຣູຊາເລັມ ໃນເດືອນທີສາມຂອງປີທີສິບຫ້າ
ໃນລາຊະການຂອງອາຊາ 11ພວກເຂົາຖວາຍສັດບູຊາແດ່ພຣະຜູ້ເປັນເຈົ້າໃນມື້ນັ້ນຈາກເຄື່ອງ
ຂອງທີ່ພວກເຂົາໄດ້ຍຶດມາ ມີງົວເຖິກເຈັດຮ້ອຍໂຕ ແລະແກະເຈັດພັນໂຕ 12ເຂົາກໍເຮັດຄຳໝັ້ນ-
ສັນຍາທີ່ຈະສະແຫວງຫາພຣະຜູ້ເປັນເຈົ້າພຣະເຈົ້າ ແຫ່ງບັນພະບູລຸດຂອງພວກເຂົາດ້ວຍສຸດຈິດ
ສຸດໃຈຂອງພວກເຂົາ 13ແລະຜູ້ໃດທີ່ບໍ່ສະແຫວງຫາພຣະຜູ້ເປັນເຈົ້າພຣະເຈົ້າ ແຫ່ງ ອິສຣາເອນ
ຄວນຈະມີໂທດເຖິງຕາຍ ບໍ່ວ່ານ້ອຍ ຫລືໃຫຍ່ ບໍ່ວ່າຊາຍ ຫລືຍິງ 14ພວກເຂົາໄດ້ເຮັດຄຳສັນຍາ
ສາບານຕໍ່ພຣະຜູ້ເປັນເຈົ້າດ້ວຍສຽງອັນດັງ ແລະດ້ວຍສຽງໂຫ່ຮ້ອງ ດ້ວຍສຽງແກແລະເຂົາສັດ

[15]ຢູດາ ທັງປວງກໍຊົມຊື່ນຍິນດີເພາະຄຳສາບານນັ້ນ ເພາະພວກເຂົາໄດ້ປະຕິຍານດ້ວຍສຸດໃຈ
ຂອງຕົນ ແລະໄດ້ສະແຫວງຫາພຣະອົງດ້ວຍສຸດຄວາມປາດຖະໜາຂອງຕົນ ພວກເຂົາກໍພົບ
ພຣະອົງ ແລະພຣະຜູ້ເປັນເຈົ້າຊົງປະທານໃຫ້ພວກເຂົາມີຄວາມສະຫງົບສຸກຮອບດ້ານ
[16]ເຖິງວ່າ ມາອາກາ ແມ່ຂອງກະສັດ ອາຊາ ພະອົງກໍຊົງຖອດອອກຈາກການເປັນພະມານດາ
ເພາະພະນາງໄດ້ເຮັດຮູບເຄົາລົບອັນໜ້າກຽດຊັງໃນເສົາຮູບເຄົາລົບ ອາຊາ ຊົງທຳລາຍຮູບເຄົາ-
ລົບຂອງພະນາງລົງ ແລະບົດ ແລ້ວເຜົາເສຍທີ່ຫ້ວຍນ້ຳ ກິດໂຣນ [17]ແຕ່ຍັງບໍ່ໄດ້ກຳຈັດປູຊະນີ-
ຍະສະຖານສູງອອກຈາກ ອິສຣາເອນ ຢ່າງໃດກໍດີ ພະໄທຂອງ ອາຊາ ກໍບໍລິສຸດຕະຫລອດລາ-
ຊະການຂອງພະອົງ [18]ພະອົງຊົງນຳເຄື່ອງອຸທິດຖວາຍຂອງຜູ້ເປັນ ລວມທັງເຄື່ອງທີ່ພະອົງເອງ
ຊົງອຸທິດຖວາຍ ມີເງິນ ແລະຄຳ ແລະເຄື່ອງໃຊ້ເຂົ້າໄປໃນພຣະວິຫານຂອງ ພຣະເຈົ້າ
[19]ແລະບໍ່ມີສົງຄາມອີກຈົນປີທີສາມສິບຫ້າໃນລາຊະການຂອງ ອາຊາ

# ບົດທີ 16

## ສົງຄາມລະຫວ່າງອາຊາກັບບາອາຊາ[ກ]

[1]ໃນປີທີສາມສິບຫົກແຫ່ງລາຊະການ ອາຊາ ບາອາຊາ ກະສັດແຫ່ງ ອິສຣາເອນ ຂຶ້ນມາຕໍ່ສູ້ກັບ
ຢູດາ ແລະໄດ້ສ້າງເມືອງ ຣາມາ ເພື່ອວ່າພະອົງຈະບໍ່ຊົງໃຫ້ຄົນໜຶ່ງຄົນໃດອອກໄປ ຫລືເຂົ້າມາ
ຫາ ອາຊາ ກະສັດຂອງ ຢູດາ [2]ແລ້ວ ອາຊາ ຊົງເອົາເງິນ ແລະຄຳຈາກຄັງຂອງພຣະວິຫານຂອງ
ພຣະຜູ້ເປັນເຈົ້າ ແລະລາຊະສຳນັກ ສົ່ງໄປໃຫ້ ເບັນຮາດັດ ກະສັດແຫ່ງ ຊີເຣຍ ຜູ້ປະທັບໃນເມືອງ
ດາມາເຊ ວ່າ [3]"ຂໍໃຫ້ມີຄວາມສຳພັນລະຫວ່າງຂ້າພະເຈົ້າ ແລະພະອົງ ດັ່ງທີ່ມີຢູ່ກັບພໍ່ຂອງຂ້າ-
ພະເຈົ້າ ແລະພໍ່ຂອງພະອົງ ເບິ່ງແມ ຂ້າພະເຈົ້າໄດ້ສົ່ງເງິນ ແລະຄຳມາໃຫ້ພະອົງ ຂໍສະເດັດໄປ
ທຳລາຍສັນຍາຂອງພະອົງທີ່ມີກັບ ບາອາຊາ ກະສັດແຫ່ງ ອິສຣາເອນ ເພື່ອພວກເຂົາຈະຖອຍທັບ
ໄປຈາກຂ້າພະເຈົ້າ" [4]ເບັນຮາດັດ ຊົງເຊື່ອຟັງກະສັດ ອາຊາ ແລະສົ່ງຜູ້ບັງຄັບບັນຊາກອງທັບ
ຂອງພະອົງໄປຕໍ່ສູ້ກັບຫົວເມືອງຂອງ ອິສຣາເອນ ພວກເຂົາທັງຫລາຍໂຈມຕີເມືອງ ອີໂຢນ ດານ
ອາເບັນ-ມາຢິມ ແລະຫົວເມືອງຄັງຫລວງທັງໝົດຂອງ ນັບທາລີ [5]ຕໍ່ມາເມື່ອ ບາອາຊາ ຊົງໄດ້ຍິນ
ເລື່ອງນັ້ນ ພະອົງຊົງຢຸດສ້າງເມືອງ ຣາມາ ແລະໃຫ້ພະລາຊະກິດຂອງພະອົງຢຸດຊະງັກ [6]ແລ້ວ
ກະສັດ ອາຊາ ຊົງນຳ ຢູດາ ທັງໝົດ ພວກເຂົາທັງຫລາຍຂົນຫີນຂອງເມືອງ ຣາມາ ແລະເຄື່ອງໄມ້
ຂອງເມືອງນັ້ນ ຊຶ່ງ ບາອາຊາ ໃຊ້ສ້າງ ແລ້ວເອົາມາສ້າງເມືອງ ເກບາ ແລະເມືອງ ມິດຊະປາ

## ພຣະເຈົ້າຊົງຕິຕຽນອາຊາເລື່ອງການປະນີປະນອມ

[7]ເທື່ອນັ້ນ ຮານານີ ຜູ້ທຳນວາຍໄດ້ມາເຝົ້າ ອາຊາ ກະສັດຂອງ ຢູດາ ແລະທູນພະອົງວ່າ "ເພາະ
ທ່ານເພິ່ງກະສັດຂອງ ຊີເຣຍ ໂດຍບໍ່ໄດ້ເພິ່ງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງທ່ານ ເພາະສະນັ້ນ
ກອງທັບຂອງກະສັດ ຊີເຣຍ ຈຶ່ງໄດ້ຫລຸດພົ້ນມືທ່ານໄປ [8]ຄົນ ເອທີໂອເປຍ ແລະຊາວ ລີເບຍ ບໍ່
ແມ່ນກອງທັບໃຫຍ່ທີ່ມີລົດຮົບ ແລະທະຫານມ້າຢ່າງຫລວງຫລາຍ ແຕ່ເພາະທ່ານເພິ່ງ ພຣະຜູ້-
ເປັນເຈົ້າ ພຣະອົງຈະຊົງມອບພວກເຂົາທັງຫລາຍໄວ້ໃນມືຂອງທ່ານ [9]ເພາະວ່າພຣະເນດຂອງ

[ກ]1 ປະຫວັດກະສັດ 15:16-22

ພຣະຜູ້ເປັນເຈົ້າກໍຢູ່ເໜືອແຜ່ນດິນໂລກທັງໝົດ ເພື່ອສະແດງລິດທານຸພາບຂອງ ພຣະອົງໂດຍ
ເຫັນແກ່ຜູ້ທີ່ມີໃຈຈິງຕໍ່ພຣະອົງ ໃນເລື່ອງນີ້ທ່ານໄດ້ເຮັດຢ່າງໂງ່ຈ້າ ເພາະຕັ້ງແຕ່ນີ້ໄປທ່ານຈະມີ-
ການເສິກສົງຄາມ” [10]ຝ່າຍອາຊາກໍຊົງຮ້າຍຕໍ່ຜູ້ທຳນວາຍນັ້ນ ແລະຈັບລາວຂັງໄວ້ໃນຄຸກ ເພາະ
ພະອົງຊົງຮ້າຍຫລາຍແກ່ລາວໃນເລື່ອງນີ້ ທັງຊົງຂົ່ມເຫັງປະຊາຊົນບາງຄົນໃນເວລາດຽວກັນນັ້ນ
ດ້ວຍ

[11]ແລະເບິ່ງແມ ພະລາຊະກິດຂອງອາຊາ ຕັ້ງແຕ່ຕົ້ນຈົນສຸດທ້າຍ ໄດ້ບັນທຶກໄວ້ໃນໜັງສື
ຂອງກະສັດແຫ່ງຢູດາ ແລະອິສຣາເອນ

## ການສິ້ນພະຊົນຂອງອາຊາ[ກ]

[12]ໃນປີທີສາມສິບເກົ້າແຫ່ງລາຊະການຂອງພະອົງ ອາຊາຊົງເປັນພະຍາດທີ່ພະບາດຂອງພະ
ອົງ ແລະພະຍາດຂອງພະອົງກໍຮ້າຍແຮງຫລາຍ ແມ່ນວ່າເປັນພະຍາດຢູ່ພະອົງກໍບໍ່ໄດ້ຊົງສະ-
ແຫວງຫາ ພຣະຜູ້ເປັນເຈົ້າ ແຕ່ໄດ້ສະແຫວງຫາຄວາມຊ່ວຍເຫລືອຈາກແພດໝໍ [13]ອາຊາຊົງ
ລ່ວງລັບໄປຢູ່ກັບບັນພະບູລຸດຂອງພະອົງ ພະອົງສິ້ນພະຊົນໃນປີທີສີ່ສິບເອັດແຫ່ງລາຊະການ
ຂອງພະອົງ [14]ພວກເຂົາຝັງພະສົບໄວ້ໃນຂຸມຝັງສົບຂອງພະອົງ ຊຶ່ງພະອົງໄດ້ສະກັດໄວ້ແລ້ວໃນ
ນະຄອນດາວິດ ພວກເຂົາວາງພະສົບຂອງພະອົງໄວ້ເທິງແທ່ນທີ່ມີເຄື່ອງຫອມຕ່າງໆເຕັມໄປ
ໝົດ ຊຶ່ງຊ່າງປຸງເຄື່ອງຫອມໄດ້ປຸງໄວ້ ແລະໄດ້ກໍ່ແປວໄຟໃຫຍ່ຖວາຍພະອົງ

# ບົດທີ 17

## ເຢໂຮຊາຟັດປົກຄອງແທນອາຊາ[ຂ]

[1]ເຢໂຮຊາຟັດລູກຊາຍຂອງພະອົງຂຶ້ນປົກຄອງແທນພະອົງ ແລະຊົງເສີມກຳລັງທະຫານຕໍ່ສູ້
ອິສຣາເອນ [2]ພະອົງຊົງວາງກຳລັງທະຫານໄວ້ໃນຫົວເມືອງທີ່ມີປ້ອມທັງປວງຂອງຢູດາ ແລະຊົງ
ຕັ້ງທະຫານປະຈຳປ້ອມໃນແຜ່ນດິນຢູດາ ແລະໃນຫົວເມືອງເອຟຣາຢິມ ຊຶ່ງອາຊາພໍ່ຂອງພະ
ອົງໄດ້ຍຶດໄວ້

[3]ພຣະຜູ້ເປັນເຈົ້າຊົງສະຖິດກັບເຢໂຮຊາຟັດ ເພາະພະອົງຊົງດຳເນີນດາວິດພໍ່ຂອງພະອົງ
ພະອົງບໍ່ໄດ້ຊົງສະແຫວງຫາບັນດາພະບາອານ [4]ແຕ່ໄດ້ສະແຫວງຫາພຣະຜູ້ເປັນເຈົ້າພຣະເຈົ້າ
ຂອງບິດາພະອົງ ແລະດຳເນີນໃນພຣະບັນຍັດຂອງພຣະອົງ ບໍ່ໄດ້ຊົງດຳເນີນຕາມອິສຣາເອນ
ເລີຍ [5]ເພາະສະນັ້ນ ພຣະຜູ້ເປັນເຈົ້າຊົງສະຖາປະນາລາຊະອານາຈັກໄວ້ໃນພະຫັດຂອງພະອົງ
ແລະທັງຢູດາກໍນຳເຄື່ອງບັນນາການມາຖວາຍເຢໂຮຊາຟັດ ພະອົງຈຶ່ງຮັ່ງມີຢ່າງຫລວງຫລາຍ
ແລະມີກຽດ

## ການຟື້ນຟູຄືນໃໝ່ໃນສະໄໝເຢໂຮຊາຟັດ

[6]ພະໄທຂອງພະອົງເຂັ້ມແຂງຂຶ້ນໃນເສັ້ນທາງຂອງພຣະຜູ້ເປັນເຈົ້າ ພະອົງຈຶ່ງຊົງກຳຈັດປູ-
ຊະນີຍະສະຖານສູງ ແລະບັນດາເສົາຮູບເຄົາລົບໄປຈາກຢູດາ

[7]ໃນປີທີສາມແຫ່ງລັດຊະການຂອງພະອົງ ພະອົງຊົງໃຊ້ເຈົ້ານາຍຂອງພະອົງຄື ເບັນ-ຮາຍ

[ກ]1 ປະຫວັດກະສັດ 15:23-24 [ຂ]1 ປະຫວັດກະສັດ 15:24

ໂອບາດີຢາ ເຊຄາຣີຢາ ເນທາເນນ ແລະ ມີກາຢາ ໄປສັ່ງສອນໃນຫົວເມືອງຂອງ ຢູດາ [8]ມີຄົນ
ເລວີ ໄປກັບພວກເຂົາດ້ວຍຄື ເຊມາຢາ ເນທານີອາ ເຊບາດີຢາ ອາສາເຮນ ເຊມີຣາໂມດ
ເຢໂຮນາທານ ອາໂດນີຢາ ໂຕບີຢາ ແລະ ໂຕບ-ອາໂດນີຢາ ຄົນ ເລວີ ພ້ອມກັບຄົນເຫລົ່ານີ້ມີ
ເອລີຊາມາ ແລະ ເຢໂຮຣາມ ຜູ້ເປັນປະໂລຫິດ [9]ພວກເຂົາທັງຫລາຍໄດ້ສັ່ງສອນໃນ ຢູດາ ມີ
ໜັງສືພຣະບັນຍັດຂອງ ພຣະຜູ້ເປັນເຈົ້າ ໄປກັບພວກເຂົາດ້ວຍ ພວກເຂົາທ່ຽວໄປທົ່ວຫົວເມືອງທັງ
ໝົດແຫ່ງ ຢູດາ ແລະໄດ້ສັ່ງສອນປະຊາຊົນ

## ພຣະເຈົ້າຊົງເສີມກຳລັງໃຫ້ເຢໂຮຊາຟັດ

[10]ຄວາມຢ້ານກົວອັນມາຈາກ ພຣະຜູ້ເປັນເຈົ້າ ຕົກຢູ່ເໜືອບັນດາລາຊະອານາຈັກແຫ່ງ ແຜ່ນດິນ
ຕ່າງໆທີ່ຢູ່ຮອບ ຢູດາ ແລະພວກເຂົາບໍ່ໄດ້ເຮັດສົງຄາມກັບ ເຢໂຮຊາຟັດ [11]ຄົນ ຟີລິດສະຕິນ ບາງ
ພວກໄດ້ນຳເອົາຂອງຂວັນມາຖວາຍ ເຢໂຮຊາຟັດ ແລະນຳເງິນມາເປັນບັນນາການ ພວກ ອາ-
ຫລັບ ໄດ້ນຳຝູງ ແບ້ ແກະ ຄື ແກະຜູ້ເຈັດພັນເຈັດຮ້ອຍ ໂຕ ແລະ ແບ້ຜູ້ເຈັດພັນເຈັດຮ້ອຍ ໂຕມາ
ຖວາຍພະອົງ

[12]ແລະ ເຢໂຮຊາຟັດ ຊົງຈະເລີນຍິ່ງໃຫຍ່ຂຶ້ນເປັນລຳດັບ ພະອົງຊົງສ້າງປ້ອມ ແລະຫົວເມືອງ
ຄັງຫລວງໄວ້ໃນ ຢູດາ [13]ພະອົງຊົງມີພະລາຊະກິດຫລວງຫລາຍໃນຫົວເມືອງຂອງ ຢູດາ ພະອົງ
ຊົງມີທະຫານຜູ້ເກັ່ງກ້າໃນເມືອງ ເຢຣູຊາເລັມ [14]ຕໍ່ໄປນີ້ເປັນຈຳນວນຕາມເຮືອນບັນພະບູລຸດຂອງ
ພວກເຂົາຄື ຂອງ ຢູດາ ຜູ້ບັງຄັບບັນຊາກອງພັນມີ ອັດນາ ຜູ້ບັງຄັບບັນຊາ ພ້ອມກັບທະຫານ
ສາມແສນຄົນ [15]ຖັດລາວໄປຄື ເຢໂຮຮານັນ ຜູ້ບັງຄັບບັນຊາພ້ອມກັບສອງແສນ ແປດໝື່ນຄົນ
[16]ແລະຖັດລາວໄປຄື ອາມາສີຢາ ລູກຊາຍ ຊິກຣີ ເປັນຄົນອາສາສະໝັກເພື່ອການບົວລະບັດ
ພຣະຜູ້ເປັນເຈົ້າ ພ້ອມກັບທະຫານສອງແສນຄົນ

[17]ຂອງ ເບັນຢາມິນ ຄື ເອລີອາດາ ທະຫານທີ່ເກັ່ງ ກັບຄົນສອງແສນຄົນພ້ອມດ້ວຍທະນູ ແລະ
ໂລ່ [18]ແລະຖັດລາວໄປຄື ເຢໂຮຊາບັດ ພ້ອມກັບຄົນຕິດອາວຸດໜຶ່ງແສນແປດໝື່ນຄົນ

[19]ເຫລົ່ານີ້ເປັນຂ້າລາຊະການຂອງກະສັດ ນອກເໜືອຈາກຜູ້ທີ່ກະສັດຊົງວາງໄວ້ໃນຫົວເມືອງ
ທີ່ມີປ້ອມທົ່ວແຜ່ນດິນ ຢູດາ

# ບົດທີ 18

## ເຢໂຮຊາຟັດຊົງເປັນພັນທະມິດກັບອາຮາບ[ກ]

[1]ຝ່າຍ ເຢໂຮຊາຟັດ ຊົງຮັ່ງມີ ແລະມີກຽດຍິ່ງໃຫຍ່ ພະອົງຊົງເປັນທອງແຜ່ນດຽວກັນກັບ ອາ-
ຮາບ [2]ຄັນລ່ວງມາຫລາຍປີ ພະອົງສະເດັດລົງໄປເຝົ້າ ອາຮາບ ໃນ ຊາມາເຣຍ ແລະ ອາຮາບ ຊົງ
ຂ້າ ແກະ ແລະ ງົວຫລາຍ ໂຕສຳລັບພະອົງ ແລະສຳລັບທະຫານທີ່ມາກັບພະອົງ ແລະຊົງຊັກ
ຊວນພະອົງໃຫ້ຂຶ້ນໄປຕໍ່ສູ້ກັບ ຣາໂມດ-ກີເລອາດ [3]ອາຮາບ ກະສັດແຫ່ງ ອິສຣາເອນ ກ່າວກັບ ເຢ-
ໂຮຊາຟັດ ກະສັດແຫ່ງ ຢູດາ ວ່າ “ທ່ານຈະໄປກັບຂ້າພະເຈົ້າທີ່ ຣາໂມດ-ກີເລອາດ ຫລືບໍ່?” ພະອົງ
ທູນຕອບກະສັດ ອາຮາບ ວ່າ “ຂ້າພະເຈົ້າກໍເປັນຄືກັບທີ່ທ່ານເປັນ ປະຊາຊົນຂອງຂ້າພະເຈົ້າກໍ

[ກ]1 ປະຫວັດກະສັດ 22:2 [ຂ]1 ປະຫວັດກະສັດ 22:13-28

ເປັນດັ່ງປະຊາຊົນຂອງທ່ານ ເຮົາຈະຢູ່ກັບທ່ານໃນສົງຄາມນັ້ນ” [4]ເຢໂຮຊາຟັດກ່າວກັບກະສັດ
ແຫ່ງ ອິສຣາເອນ ວ່າ “ຂໍສອບຖາມເບິ່ງພຣະຄຳຈາກ ພຣະຜູ້ເປັນເຈົ້າ ມື້ນີ້ກ່ອນ” [5]ແລ້ວກະສັດ
ແຫ່ງ ອິສຣາເອນ ກໍເອີ້ນປະຊຸມພວກຜູ້ທຳນວາຍປະມານສີ່ຮ້ອຍຄົນ ກ່າວກັບພວກເຂົາວ່າ “ຄວນ
ທີ່ເຮົາຈະໄປຕີ ຣາໂມດ-ກິເລອາດຫລືບໍ່ ຫລືເຮົາບໍ່ຄວນໄປ” ພວກເຂົາທັງຫລາຍທູນຕອບວ່າ “ຂໍ
ເຊີນສະເດັດຂຶ້ນໄປໂລດ ເພາະ ພຣະເຈົ້າ ຈະຊົງມອບໄວ້ໃນພະຫັດຂອງກະສັດ” [6]ແຕ່ ເຢໂຮຊາ-
ຟັດ ທູນວ່າ “ບ່ອນນີ້ບໍ່ມີຜູ້ທຳນວາຍຂອງ ພຣະຜູ້ເປັນເຈົ້າ ຈັກຄົນໜຶ່ງເລີຍບໍ ຊຶ່ງເຮົາຈະສອບຖາມ
ໄດ້” [7]ແລະກະສັດ ແຫ່ງ ອິສຣາເອນ ທູນ ເຢໂຮຊາຟັດ ວ່າ “ຍັງມີຊາຍອີກຄົນໜຶ່ງ ຊຶ່ງເຮົາຈະໃຫ້
ທູນຖາມ ພຣະຜູ້ເປັນເຈົ້າ ໄດ້ ແຕ່ຂ້າພະເຈົ້າຊັງລາວ ເພາະລາວທຳນວາຍ ແຕ່ຄວາມຮ້າຍສະເໝີ
ບໍ່ເຄີຍບອກຄວາມດີກ່ຽວກັບຂ້າພະເຈົ້າເລີຍ ຄົນນັ້ນຄື ມີກາຢາ ລູກຊາຍ ອິມລາ” ຝ່າຍ ເຢໂຮຊາ-
ຟັດ ທູນວ່າ “ຂໍກະສັດຢ່າກ່າວດັ່ງນັ້ນເລີຍ” [8]ແລ້ວກະສັດ ແຫ່ງ ອິສຣາເອນ ຈຶ່ງເອີ້ນຂ້າລາຊະການ
ປະຈຳວັງຄົນໜຶ່ງເຂົ້າມາ ແລະກ່າວສັ່ງວ່າ “ໄປພາ ມີກາຢາ ລູກຊາຍ ອິມລາ ມາໄວໆ”
[9]ຝ່າຍກະສັດ ແຫ່ງ ອິສຣາເອນ ແລະ ເຢໂຮຊາຟັດ ກະສັດ ແຫ່ງ ຢູດາ ຕ່າງປະທັບ ເທິງພະທີ່ນັ່ງ
ຊົງນຸ່ງເຄື່ອງປະຈຳຕຳແໜ່ງຂອງພະອົງ ໃນບ່ອນວ່າງຊື່ທາງເຂົ້າປະຕູເມືອງ ຊາມາເຣຍ ແລະຜູ້
ທຳນວາຍທັງປວງກໍພວມທຳນວາຍຖວາຍ ເພິ່ນຢູ່ [10]ແລ້ວ ເຊເດກີຢາ ລູກຊາຍ ເຄນາອານາ ຈຶ່ງ
ເອົາເຫລັກເຮັດເປັນເຂົາ ແລະເວົ້າວ່າ “ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ‘ດ້ວຍສິ່ງເຫລົ່ານີ້ ເຈົ້າຈະ
ຊຸກຄົນ ຊີເຣຍ ໄປຈົນພວກເຂົາຖືກທຳລາຍໝົດ’” [11]ແລະບັນດາຜູ້ທຳນວາຍກໍທຳນວາຍຢ່າງນັ້ນ
ທູນວ່າ “ຂໍສະເດັດຂຶ້ນໄປ ຣາໂມດ-ກິເລອາດ ເຖີດ ແລະຈະມີໄຊຊະນະ ເພາະ ພຣະຜູ້ເປັນເຈົ້າ
ຈະຊົງມອບເມືອງນັ້ນໄວ້ໃນພະຫັດຂອງກະສັດ”

## ຜູ້ທຳນວາຍມີກາຢາທຳນວາຍເຖິງການສິ້ນພະຊົນຂອງອາຮາບ[ຂ]

[12]ຜູ້ສົ່ງຂ່າວທີ່ໄປຫາ ມີກາຢາ ໄດ້ບອກເພິ່ນວ່າ “ເບິ່ງແມ ຖ້ອຍຄຳຂອງບັນດາຜູ້ທຳນວາຍກໍ
ເວົ້າສິ່ງທີ່ດີແກ່ກະສັດ ເປັນປາກດຽວກັນ ຂໍໃຫ້ຖ້ອຍຄຳຂອງທ່ານ ເປັນ ເໝືອນຖ້ອຍຄຳຂອງຄົນ
ໜຶ່ງໃນພວກນັ້ນ ແລະເວົ້າແຕ່ສິ່ງທີ່ດີ” [13]ແຕ່ ມີກາຢາ ຕອບວ່າ “ພຣະຜູ້ເປັນເຈົ້າ ຊົງພຣະຊົນຢູ່
ສັນໃດ ພຣະເຈົ້າ ຂອງຂ້າພະເຈົ້າກ່າວວ່າຢ່າງໃດ ຂ້າພະເຈົ້າຈະເວົ້າຢ່າງນັ້ນ”
[14]ແລະເມື່ອເພິ່ນມາເຝົ້າກະສັດ ກະສັດກ່າວຖາມເພິ່ນວ່າ “ມີກາຢາ ຄວນທີ່ເຮົາຈະໄປຕີ ຣາ-
ໂມດ-ກິເລອາດບໍ່ ຫລືເຮົາບໍ່ຄວນໄປ” ເພິ່ນທູນຕອບພະອົງວ່າ “ຂໍເຊີນສະເດັດຂຶ້ນໄປ ແລະຈະ
ມີໄຊຊະນະ ພວກ ເຂົາທັງຫລາຍ ຈະຖືກມອບ ໄວ້ໃນພະຫັດຂອງພະອົງ” [15]ແຕ່ກະສັດກ່າວກັບ
ເພິ່ນວ່າ “ເຮົາໄດ້ໃຫ້ເຈົ້າປະຕິຍານຈັກເທື່ອແລ້ວວ່າ ເຈົ້າຈະ ເວົ້າກັບ ເຮົາແຕ່ຄວາມຈິງ ໃນພຣະ-
ນາມຂອງ ພຣະຜູ້ເປັນເຈົ້າ” [16]ເພິ່ນຈຶ່ງທູນວ່າ “ຂ້າພະອົງໄດ້ເຫັນຄົນ ອິສຣາເອນ ທັງປວງກະ-
ຈັດກະຈາຍຢູ່ເທິງພູເຂົາ ເປັນເໝືອນແກະທີ່ບໍ່ມີຜູ້ລ້ຽງ ແລະ ພຣະຜູ້ເປັນເຈົ້າ ກ່າວວ່າ ‘ຄົນເຫລົ່າ
ນີ້ບໍ່ມີເຈົ້ານາຍ ໃຫ້ເຂົາກັບ ເມືອເຮືອນຂອງຕົນ ໂດຍສະຫວັດດີພາບສາ’” [17]ກະສັດ ແຫ່ງ ອິສຣາ-
ເອນ ຈຶ່ງທູນ ເຢໂຮຊາຟັດ ວ່າ “ຂ້າພະເຈົ້າໄດ້ບອກທ່ານແລ້ວບໍ່ແມ່ນຫລືວ່າ ລາວຈະບໍ່ທຳນວາຍ
ສິ່ງດີກ່ຽວກັບຂ້າພະເຈົ້າເລີຍ ມີແຕ່ສິ່ງຊົ່ວຮ້າຍຕ່າງຫາກ” [18]ແລ້ວ ມີກາຢາ ທູນວ່າ “ສະນັ້ນ ຂໍ
ຮັບຟັງພະທຳຂອງ ພຣະຜູ້ເປັນເຈົ້າ ຂ້າພະອົງໄດ້ເຫັນ ພຣະຜູ້ເປັນເຈົ້າ ປະທັບ ເທິງພຣະທີ່ນັ່ງ

ຂອງພຣະອົງ ແລະບັນດາບໍລິວານແຫ່ງຟ້າສະຫວັນຢືນຢູ່ຂ້າງຂວາພຣະຫັດ ແລະຂ້າງຊ້າຍ
19ແລະ ພຣະຜູ້ເປັນເຈົ້າ ກ່າວວ່າ 'ຜູ້ໃດຈະຫລອກລວງ ອາຮາບ ກະສັດ ແຫ່ງ ອິສຣາເອນ ເພື່ອ
ພວກເຂົາຈະຂຶ້ນໄປ ແລະລົ້ມລົງທີ່ ຣາໂມດ-ກີເລອາດ?' ບາງຄົນກໍທູນຢ່າງນີ້ ບາງຄົນກໍທູນ
ຢ່າງນັ້ນ 20ແລ້ວມີວິນຍານດວງໜຶ່ງມາເຝົ້າຕໍ່ພຣະພັກ ພຣະຜູ້ເປັນເຈົ້າ ທູນວ່າ 'ຂ້າພະອົງຈະ
ຫລອກລວງພວກເຂົາເອງ' ແລະ ພຣະຜູ້ເປັນເຈົ້າ ກ່າວກັບວິນຍານນັ້ນວ່າ 'ຈະເຮັດຢ່າງໃດ'
21ຝ່າຍວິນຍານນັ້ນກໍທູນວ່າ 'ຂ້າພະອົງຈະອອກໄປ ແລະຈະເປັນວິນຍານຂີ້ຕົວະຢູ່ໃນປາກຂອງ
ຜູ້ທຳນວາຍຂອງພວກເຂົາທຸກຄົນ' ແລະ ພຣະຜູ້ເປັນເຈົ້າກ່າວວ່າ 'ເຈົ້າໄປຫລອກລວງພວກເຂົາ
ໄດ້ ແລະເຈົ້າຈະເຮັດໄດ້ສຳເລັດ ຈົ່ງໄປເຮັດເຊັ່ນນັ້ນສາ' 22ເພາະສະນັ້ນ ບັດນີ້ ເບິ່ງແມ ພຣະ-
ຜູ້ເປັນເຈົ້າ ຊົງໃສ່ວິນຍານຂີ້ຕົວະໃນປາກຂອງພວກຜູ້ທຳນວາຍຂອງພະອົງ ພຣະຜູ້ເປັນເຈົ້າ ຊົງ
ລັ່ນພຣະຄຳເວົ້າເປັນຄວາມຮ້າຍກ່ຽວກັບພະອົງ" 23ແລ້ວ ເຊເດກີຢາ ລູກຊາຍ ເຄນາອານາ ໄດ້ເຂົ້າ
ມາໃກ້ ແລະຕົບແກ້ມ ມີກາຢາ ເວົ້າວ່າ "ພຣະວິນຍານ ຂອງ ພຣະຜູ້ເປັນເຈົ້າ ອອກຈາກຂ້ອຍເວົ້າ
ກັບເຈົ້າໄດ້ຢ່າງໃດ" 24ຝ່າຍ ມີກາຢາ ຕອບວ່າ "ເບິ່ງແມ ເຈົ້າຈະເຫັນໃນມື້ນັ້ນ ເມື່ອເຈົ້າເຂົ້າໄປ
ໃນຫ້ອງຊັ້ນໃນ ເພິ່ນຈະເຊື່ອງຕົວເຈົ້າໄວ້" 25ແລະກະສັດແຫ່ງ ອິສຣາເອນ ກ່າວວ່າ "ຈົ່ງຈັບ ມີ-
ກາຢາ ພາລາວກັບໄປມອບໃຫ້ ອາໂມນ ຜູ້ວ່າລາຊະການ ເມືອງ ແລະ ແກ່ ໂຢອາດ ລູກຊາຍ
26ແລະບອກວ່າ 'ກະສັດກ່າວດັ່ງນີ້ວ່າ ເອົາຄົນນີ້ໄປຂັງຄຸກເສຍ ໃຫ້ອາຫານແຫ່ງຄວາມທຸກກັບ
ນ້ຳແຫ່ງຄວາມທຸກ ຈົນກວ່າເຮົາຈະກັບມາໂດຍສະຫວັດດີພາບ'" 27ແລະ ມີກາຢາ ທູນວ່າ "ຖ້າ
ພະອົງສະເດັດກັບມາໂດຍສະຫວັດດີພາບ ພຣະຜູ້ເປັນເຈົ້າ ກໍບໍ່ໄດ້ກ່າວໂດຍຂ້າພະອົງ" ແລະ
ເພິ່ນກ່າວຕໍ່ອີກວ່າ "ບັນດາຊົນຊາດທັງຫລາຍເອີຍ ຂໍຈົ່ງຟັງເຖີດ"

## ເສິກສົງຄາມທີ່ຣາໂມດ-ກີເລອາດ ອາຮາບຖືກຂ້າ

28ກະສັດແຫ່ງ ອິສຣາເອນ ກັບ ເຢໂຮຊາຟັດ ກະສັດແຫ່ງ ຢູດາ ຈຶ່ງສະເດັດຂຶ້ນໄປ ຣາໂມດ-ກີເລ-
ອາດ 29ແລະກະສັດແຫ່ງ ອິສຣາເອນ ກ່າວກັບ ເຢໂຮຊາຟັດ ວ່າ "ຂ້າພະເຈົ້າຈະປອມຕົວເຂົ້າໄປ
ເຮັດເສິກ ແຕ່ທ່ານຈົ່ງສວມເຄື່ອງຊົງຂອງທ່ານ" ແລະກະສັດແຫ່ງ ອິສຣາເອນ ກໍຊົງປອມພະອົງ
ແລ້ວທັງສອງພະອົງກໍເຂົ້າເຮັດສົງຄາມ 30ຝ່າຍກະສັດປະເທດ ຊີເຣຍ ຊົງບັນຊາບັນດາຜູ້ບັນຊາ
ການລົດຮົບຂອງພະອົງວ່າ "ຢ່າຮົບກັບທະຫານນ້ອຍ ຫລືໃຫຍ່ ແຕ່ມຸ້ງສະເພາະກະສັດແຫ່ງ ອິ-
ສຣາເອນ" 31ແລະຢູ່ມາ ເມື່ອຜູ້ບັນຊາການລົດຮົບ ແລ ເຫັນ ເຢໂຮຊາຟັດ ພວກເຂົາທັງຫລາຍກໍ
ເວົ້າວ່າ "ເປັນກະສັດ ອິສຣາເອນ ແລ້ວ" ພວກເຂົາຈຶ່ງຫັນເຂົ້າໄປຈະສູ້ຮົບກັບພະອົງ ແລະ ເຢໂຮ-
ຊາຟັດ ຊົງຮ້ອງຂຶ້ນ ພຣະຜູ້ເປັນເຈົ້າ ຈຶ່ງຊົງຊ່ວຍພະອົງ ພຣະເຈົ້າ ຊົງ ໃຫ້ພວກເຂົາທັງຫລາຍ
ອອກໄປຈາກພະອົງ 32ແລະຢູ່ມາເມື່ອຜູ້ບັນຊາການລົດຮົບເຫັນວ່າບໍ່ແມ່ນກະສັດ ອິສຣາເອນ ກໍ
ຫັນລົດກັບຈາກການໄລ່ຕາມພະອົງ 33ແຕ່ມີຊາຍຄົນໜຶ່ງຍິງທະນູໄປ ຖືກກະສັດແຫ່ງ ອິສຣາ-
ເອນ ເຂົ້າລະຫວ່າງ ເກັດ ເກາະ ແລະ ແຜ່ນບັງພະອຸລະ ພະອົງ ຈຶ່ງຮັບສັ່ງກັບຄົນ ຂັບລົດວ່າ
"ຖອຍຫລັງກັບສາ ພາເຮົາອອກຈາກການຮົບ ເພາະເຮົາບາດເຈັບແລ້ວ" 34ມື້ນັ້ນການຮົບກໍດຸ-
ເດືອດຂຶ້ນ ແລະກະສັດ ອິສຣາເອນກໍດຶງພະອົງເອງຂຶ້ນໄປໃນລົດຮົບຂອງພະອົງ ຫັນພະພັກເຂົ້າ
ສູ້ຄົນ ຊີເຣຍ ຈົນຮອດຕອນແລງ ແລ້ວປະມານເວລາຕາເວັນຕົກ ພະອົງກໍສິ້ນພະຊົນ

# ບົດທີ 19

## ຜູ້ທຳນວາຍເຢຮູຕິຕຽນເຢໂຮຊາຟັດ

[1]ເຢໂຮຊາຟັດ ກະສັດ ແຫ່ງ ຢູດາ ສະເດັດກັບໄປໂດຍສະຫວັດດີພາບ ເຖິງພະລາຊະວັງຂອງພະ
ອົງ ໃນ ເມືອງ ເຢຣູຊາເລັມ [2]ແຕ່ ເຢຮູ ລູກຊາຍ ຮານານີ ຜູ້ທຳນວາຍໄດ້ອອກໄປເຝົ້າພະອົງ ທູນ
ກະສັດ ເຢໂຮຊາຟັດ ວ່າ "ຄວນທີ່ພະອົງ ຈະຊ່ວຍຄົນອະທຳ ແລະຮັກຜູ້ທີ່ກຽດຊັງ ພຣະຜູ້ເປັນ-
ເຈົ້າ ຫລື ເພາະເລື່ອງນີ້ ພຣະພິໂລດຂອງ ພຣະຜູ້ເປັນເຈົ້າ ໄດ້ອອກມາເຖິງພະອົງ [3]ຢ່າງໃດກໍດີ
ພຣະເຈົ້າ ຍັງພົບຄວາມດີໃນພະອົງຢູ່ ເພາະພະອົງໄດ້ທຳລາຍບັນດາເສົາຮູບເຄົາລົບຈາກແຜ່ນ-
ດິນເສຍ ແລະໄດ້ຕັ້ງພະໄທສະແຫວງຫາ ພຣະເຈົ້າ"

## ເຢໂຮຊາຟັດຊົງຕັ້ງພວກຜູ້ປົກຄອງ ແລະຄົນເລວີໃນແຜ່ນດິນ

[4]ເຢໂຮຊາຟັດ ປະທັບຢູ່ທີ່ ເຢຣູຊາເລັມ ແລະພະອົງຊົງອອກໄປທ່າມກາງປະຊາຊົນອີກ ຕັ້ງ-
ແຕ່ ເບເອ-ເຊບາ ຮອດພູເຂົາ ເອຟຣາຢິມ ແລະນຳພວກເຂົາທັງຫລາຍກັບມາຫາ ພຣະຜູ້ເປັນເຈົ້າ
ພຣະເຈົ້າ ແຫ່ງບັນພະບູລຸດຂອງຕົນ [5]ພະອົງຊົງຕັ້ງຜູ້ປົກຄອງໃນ ແຜ່ນດິນນັ້ນ ໃນຫົວເມືອງທີ່ມີ
ປ້ອມທັງໝົດຂອງ ຢູດາ ແຕ່ລະຫົວເມືອງ [6]ແລະກ່າວກັບຜູ້ປົກຄອງ ເຫລົ່ານັ້ນວ່າ "ຈົ່ງພິຈາລະ-
ນາສິ່ງທີ່ທ່ານທັງຫລາຍຈະ ເຮັດ ເພາະທ່ານບໍ່ໄດ້ພິພາກສາ ເພື່ອມະນຸດ ແຕ່ເພື່ອ ພຣະຜູ້ເປັນເຈົ້າ
ພຣະອົງຊົງສະຖິດກັບທ່ານ ໃນການພິພາກສາ [7]ສະນັ້ນ ຈົ່ງໃຫ້ຄວາມຢຳເກງ ພຣະຜູ້ເປັນເຈົ້າ ຢູ່
ເໜືອທ່ານ ຈົ່ງລະມັດລະວັງສິ່ງທີ່ທ່ານເຮັດ ເພາະ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງ ເຮົາບໍ່ມີຄວາມ
ອະຍຸດຕິທຳ ບໍ່ເຫັນແກ່ໜ້າຄົນໃດ ແລະບໍ່ມີການຮັບສິນບົນ"
[8]ຫລາຍກວ່ານັ້ນອີກ ໃນ ເຢຣູຊາເລັມ ເຢໂຮຊາຟັດ ຊົງຕັ້ງຄົນ ເລວີ ແລະປະໂລຫິດນຳ ກັບ
ຫົວໜ້າ ຂອງ ບັນພະບູລຸດ ແຫ່ງ ອິສຣາເອນ ເພື່ອ ຈະ ໃຫ້ການ ພິພາກສາ ແຫ່ງ ພຣະຜູ້ເປັນເຈົ້າ
ແລະພິຈາລະນາຄະດີທີ່ຂັດ ແຍ່ງກັນໃນ ເຢຣູຊາເລັມ [9]ແລະພຣະອົງຊົງສັ່ງພວກເຂົາວ່າ "ທ່ານ
ທັງຫລາຍຈົ່ງກະທຳການນີ້ດ້ວຍຄວາມຢຳເກງ ພຣະຜູ້ເປັນເຈົ້າ ດ້ວຍຄວາມສັດຊື່ ແລະດ້ວຍສຸດ
ໃຈຂອງທ່ານ [10]ເມື່ອມີຄະດີມາເຖິງທ່ານຈາກພີ່ນ້ອງຂອງທ່ານຜູ້ອາໄສຢູ່ໃນຫົວ ເມືອງຂອງຕົນ
ກ່ຽວກັບເລື່ອງຂ້າຟັນກັນ ກົດໝາຍ ຫລືພຣະບັນຍັດ ກົດເກນ ຫລືຄຳຕັດສິນ ທ່ານທັງຫລາຍກໍ
ຄວນຈະຕັກເຕືອນ ເພື່ອລາວຈະບໍ່ປົກປິດຄວາມຊົ່ວຕໍ່ ພຣະຜູ້ເປັນເຈົ້າ ພຣະພິໂລດຈຶ່ງຈະບໍ່ມາ
ເໜືອທ່ານ ແລະພີ່ນ້ອງຂອງທ່ານ ທ່ານຈົ່ງເຮັດເຊັ່ນນີ້ ແລ້ວທ່ານຈະບໍ່ກະທຳຊົ່ວ [11]ເບິ່ງແມ
ອາມາຣີຢາ ປະໂລຫິດໃຫຍ່ກໍຢູ່ ເໜືອທ່ານ ໃນພັນທະກິດຂອງ ພຣະຜູ້ເປັນເຈົ້າ ແລະ ເຊບາດີຢາ
ລູກຊາຍ ອິດຊະມາເອນ ເຈົ້ານາຍ ຂອງ ເຊື້ອສາຍ ຢູດາ ກໍຢູ່ ເໜືອທ່ານ ໃນພັນທະກິດ ຂອງກະສັດ
ແລະ ເລວີ ຈະມີເຈົ້າໜ້າທີ່ບົວລະບັດທ່ານ ຈົ່ງກະທຳການຢ່າງກ້າຫານ ແລະຂໍ ພຣະຜູ້ເປັນເຈົ້າ
ຊົງສະຖິດຢູ່ກັບຜູ້ທ່ຽງທຳ"

# ບົດທີ 20

## ຄົນໂມອາບບຸກລຸກຢູດາ

[1]ແລະຢູ່ມາພາຍຫລັງ ຄົນ ໂມອາບ ແລະຄົນ ອຳໂມນ ພ້ອມກັບພວກເຂົາຍັງມີຄົນອື່ນນອກ-

ຈາກຄົນອຳໂມນ ໄດ້ຂຶ້ນມາເຮັດສົງຄາມກັບເຢໂຮຊາຟັດ 2ມີຄົນມາທູນເຢໂຮຊາຟັດວ່າ “ມີຄົນ
ໝູ່ໃຫຍ່ມາສູ້ຮົບກັບພະອົງຈາກຊີເຣຍເບື້ອງນີ້ ຈາກຟາກທະເລຟາກນັ້ນ ແລະເບິ່ງແມ ເຂົາທັງ-
ຫລາຍຢູ່ໃນຮາຊາໂຊນ-ຕາມາ ຄືເອັນ-ເກດີ” 3ເຢໂຮຊາຟັດກໍຢ້ານກົວ ແລະຊອກສະແຫວງຫາ
ພຣະຜູ້ເປັນເຈົ້າ ແລະໄດ້ຊົງປະກາດໃຫ້ອົດອາຫານທົ່ວຢູດາ 4ແລະຢູດາໄດ້ຊຸມນຸມກັນສະ-
ແຫວງຫາຄວາມຊ່ວຍເຫລືອຈາກພຣະຜູ້ເປັນເຈົ້າ ພວກເຂົາທັງຫລາຍພາກັນມາຈາກທົ່ວເມືອງ
ທັງໝົດແຫ່ງຢູດາ ເພື່ອສະແຫວງຫາພຣະຜູ້ເປັນເຈົ້າ

5ເຢໂຮຊາຟັດປະທັບຢືນຢູ່ໃນທີ່ປະຊຸມຂອງຢູດາ ແລະ ເຢຣູຊາເລັມ ໃນພຣະວິຫານຂອງ
ພຣະຜູ້ເປັນເຈົ້າ ຕໍ່ໜ້າເດີ່ນໃໝ່ 6ແລະກ່າວທູນວ່າ “ຂ້າແດ່ພຣະຜູ້ເປັນເຈົ້າພຣະເຈົ້າແຫ່ງບັນ-
ພະບູລຸດຂອງຂ້າພະເຈົ້າທັງຫລາຍ ພຣະອົງບໍ່ໄດ້ ເປັນພຣະເຈົ້າໃນຟ້າສະຫວັນ ຫລືພຣະອົງບໍ່
ໄດ້ປົກຄອງເໜືອບັນດາລາຊະອານາຈັກຂອງປະຊາຊາດຫລື ໃນພຣະຫັດຂອງພຣະອົງມີລິດ
ແລະອຳນາດ ຈຶ່ງບໍ່ມີຜູ້ໃດຕໍ່ຕ້ານພຣະອົງໄດ້ 7ພຣະອົງເປັນພຣະເຈົ້າຂອງຂ້າພຣະອົງທັງຫລາຍ
ບໍ່ແມ່ນຫລື ຜູ້ຊົງຂັບໄລ່ຊາວແຜ່ນດິນນີ້ອອກໄປເສຍໃຫ້ພົ້ນ ໜ້າອິສຣາເອນປະຊາຊົນຂອງ
ພຣະອົງ ແລະຊົງມອບໄວ້ແກ່ເຊື້ອສາຍຂອງອັບຣາຮາມ ມິດສະຫາຍຂອງພຣະອົງເປັນນິດ
8ພວກເຂົາໄດ້ອາໄສຢູ່ໃນນັ້ນ ແລະໄດ້ສ້າງສະຖານທີ່ບໍລິສຸດແຫ່ງໜຶ່ງໃນນັ້ນຖວາຍພຣະອົງ
ເພື່ອພຣະນາມຂອງພຣະອົງ ແລ້ວທູນວ່າ 9‘ຖ້າເຫດຊົ່ວຮ້າຍເກີດຂຶ້ນມາເໜືອຂ້າພະອົງທັງ-
ຫລາຍ ຈະເປັນດາບ ການພິພາກສາ ຫລືພະຍາດລະບາດ ຫລືການອຶດຢາກອາຫານ ຂ້າພະ-
ອົງທັງຫລາຍຈະຢືນຢູ່ຕໍ່ໜ້າພຣະວິຫານນີ້ ແລະຕໍ່ພຣະພັກພຣະອົງ (ເພາະພຣະນາມຂອງພຣະ-
ອົງຢູ່ໃນພຣະວິຫານນີ້) ແລະຮ້ອງທູນຕໍ່ພຣະອົງໃນຄວາມທຸກໃຈຂອງຂ້າພະອົງທັງຫລາຍ ແລະ
ພຣະອົງຈະຊົງຟັງ ແລະຊ່ວຍໃຫ້ລອດພົ້ນ’ 10ເບິ່ງແມ ບັດນີ້ຄົນອຳໂມນ ແລະໂມອາບ ແລະ
ພູເຂົາເສອີ ຜູ້ຊຶ່ງພຣະອົງບໍ່ຊົງຍອມໃຫ້ຄົນອິສຣາເອນບຸກລຸກ ຕອນທີ່ພວກເຂົາອອກມາຈາກ
ແຜ່ນດິນເອຢິບ ແລະຜູ້ຊຶ່ງພວກເຂົາໄດ້ຫລີກໄປບໍ່ໄດ້ທຳລາຍເສຍ 11ເບິ່ງແມ ພວກເຂົາໄດ້ໃຫ້
ບຳເໜັດແກ່ເຮົາຢ່າງໃດ ດ້ວຍການມາຂັບໄລ່ເຮົາອອກເສຍຈາກແຜ່ນດິນກຳມະສິດຂອງພຣະອົງ
ທີ່ພຣະອົງປະທານໃຫ້ແກ່ຂ້າພະອົງທັງຫລາຍເປັນມໍລະດົກ 12ຂ້າແດ່ພຣະເຈົ້າຂອງຂ້າພະອົງ
ທັງຫລາຍ ພຣະອົງຈະບໍ່ຊົງກະທຳການພິພາກສາເໜືອພວກເຂົາຫລື ເພາະວ່າຂ້າ ພຣະອົງທັງ-
ຫລາຍບໍ່ມີລິດທີ່ຈະຕໍ່ສູ້ຄົນໝູ່ໃຫຍ່ນີ້ ຊຶ່ງກຳລັງມາຕໍ່ສູ້ກັບຂ້າພະອົງ ຂ້າພະອົງບໍ່ຮູ້ວ່າຈະເຮັດປະ-
ການໃດ ແຕ່ດວງຕາຂອງຂ້າພະອົງທັງຫລາຍເບິ່ງທີ່ພຣະອົງ”

13ໃນລະຫວ່າງນັ້ນຄົນທັງປວງຂອງຢູດາກໍຢືນຢູ່ຕໍ່ພຣະພັກພຣະຜູ້ເປັນເຈົ້າພ້ອມກັບເມຍ
ແລະລູກຫລານຂອງພວກເຂົາ

## ຜູ້ທຳນວາຍຂອງພຣະເຈົ້າຄືຢາຮາຊີເອນໃຫ້ຄຳຕອບ

14ແລະ ພຣະວິນຍານ ຂອງ ພຣະຜູ້ເປັນເຈົ້າ ສະເດັດມາສະຖິດກັບ ຢາຮາຊີເອນ ລູກຊາຍ ເຊ-
ຄາຣີຢາ ຜູ້ເປັນລູກຊາຍເບນາຢາ ຜູ້ເປັນລູກຊາຍເຢອີເອນ ຜູ້ເປັນລູກຊາຍມັດຕານີຢາ ເປັນ
ຄົນເລວີ ລູກຫລານຂອງອາສັບ ເມື່ອເພິ່ນຢູ່ທ່າມກາງທີ່ປະຊຸມນັ້ນ 15ເພິ່ນໄດ້ເວົ້າວ່າ “ຢູດາທັງ
ປວງ ແລະຊາວເຢຣູຊາເລັມທັງຫລາຍ ກັບກະສັດເຢໂຮຊາຟັດ ຂໍຈົ່ງຟັງ ພຣະຜູ້ເປັນເຈົ້າກ່າວ

ດັ່ງນີ້ແກ່ທ່ານທັງຫລາຍວ່າ 'ຢ່າຢ້ານເລີຍ ແລະຢ່າທໍ້ຖອຍດ້ວຍຄົນໝູ່ໃຫຍ່ນີ້ ເພາະວ່າເສິກສົງ-
ຄາມນັ້ນບໍ່ແມ່ນຂອງທ່ານ ແຕ່ເປັນຂອງ ພຣະເຈົ້າ [16]ມື້ອື່ນເຊົ້ານີ້ທ່ານທັງຫລາຍຈົ່ງລົງໄປຕໍ່ສູ້ກັບ
ພວກເຂົາ ເບິ່ງແມ ພວກເຂົາຈະຂຶ້ນມາທາງຂຶ້ນທີ່ຕາແສງຊິດ ທ່ານຈະພົບພວກເຂົາທີ່ສົ້ນສຸດ
ຂອງພູເຂົາ ຕໍ່ໜ້າຖິ່ນແຫ້ງແລ້ງກັນດານ ເຢຣູເອນ [17]ບໍ່ຈຳເປັນທີ່ທ່ານຈະຕ້ອງສູ້ຮົບໃນສົງຄາມ
ເທື່ອນີ້ ໂອ, ຢູດາ ແລະ ເຢຣູຊາເລັມ ຈົ່ງເຂົ້າປະຈຳທີ່ ຢືນມິດຢູ່ ແລະເບິ່ງໄຊຊະນະຂອງ
ພຣະຜູ້ເປັນເຈົ້າ ເພື່ອທ່ານ' ກໍຢ່າຢ້ານເລີຍ ຢ່າທໍ້ຖອຍ ມື້ອື່ນນີ້ຈົ່ງອອກໄປສູ້ກັບພວກເຂົາ ເພາະ
ພຣະຜູ້ເປັນເຈົ້າ ຈະຊົງສະຖິດຢູ່ກັບທ່ານ"
[18]ແລ້ວ ເຢໂຮຊາຟັດ ກົ້ມພະພັກຂອງພະອົງລົງ ເຖິງດິນແລະ ຢູດາທັງປວງກັບຊາວ ເຢຣູຊາເລັມ
ໄດ້ຂາບລົງຕໍ່ພຣະພັກ ພຣະຜູ້ເປັນເຈົ້າ ນະມັດສະການພຣະອົງ [19]ຄົນ ເລວີ ຈາກລູກຫລານຄົນ
ໂກຮາດ ແລະລູກຫລານຄົນ ໂກຣາ ໄດ້ຢືນຂຶ້ນຖວາຍສັນລະເສີນແດ່ ພຣະຜູ້ເປັນເຈົ້າ ພຣະເຈົ້າ
ແຫ່ງ ອິສຣາເອນ ດ້ວຍສຽງອັນດັງໃນທີ່ສູງ

## ພຣະເຈົ້າຊົງປະທານພວກທະຫານແກ່ອິສຣາເອນ

[20]ພວກເຂົາໄດ້ລຸກຂຶ້ນແຕ່ເຊົ້າ ແລະອອກໄປໃນຖິ່ນແຫ້ງແລ້ງກັນດານແຫ່ງ ເຕໂກອາ ແລະ
ເມື່ອອອກໄປ ເຢໂຮຊາຟັດປະທັບຢືນ ແລະກ່າວວ່າ "ໂອ ຢູດາ ແລະຊາວ ເຢຣູຊາເລັມ ເອີຍ
ຈົ່ງຟັງຂ້າພະເຈົ້າ ຈົ່ງ ເຊື່ອ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງທ່ານ ແລະທ່ານຈະຕັ້ງໝັ້ນຄົງຢູ່ ຈົ່ງ
ເຊື່ອບັນດາຜູ້ທຳນວາຍຂອງພຣະອົງ ແລະທ່ານຈະສຳເລັດຜົນ" [21]ເມື່ອພະອົງໄດ້ປຶກສາກັບປະ-
ຊາຊົນແລ້ວ ພະອົງໄດ້ຊົງ ແຕ່ງຕັ້ງບັນດາຜູ້ທີ່ຈະຮ້ອງເພງຖວາຍ ພຣະຜູ້ເປັນເຈົ້າ ໃຫ້ສັນລະ-
ເສີນພຣະອົງດ້ວຍ ເຄື່ອງປະດັບ ແຫ່ງຄວາມບໍລິສຸດ ຂະນະທີ່ພວກ ເຂົາຍ່າງອອກໄປຕໍ່ໜ້າສັດຕູ
ແລະຮ້ອງເພງວ່າ "ຈົ່ງຖວາຍ ໂມທະນາແດ່ ພຣະຜູ້ເປັນເຈົ້າ ເພາະຄວາມເມດຕາຂອງພຣະອົງ
ດຳລົງຢູ່ເປັນນິດ"
[22]ເມື່ອພວກເຂົາຕັ້ງຕົ້ນຮ້ອງເພງສັນລະເສີນ ພຣະຜູ້ເປັນເຈົ້າ ຊົງຈັດກອງຊຸ້ມຄອຍຖ້າຕໍ່ສູ້ກັບ
ຄົນ ອຳໂມນ ໂມອາບ ແລະຊາວພູເຂົາ ເສອີ ຜູ້ໄດ້ເຂົ້າມາຕໍ່ສູ້ກັບ ຢູດາ ດັ່ງນັ້ນ ພວກເຂົາຈຶ່ງ
ແຕກພ່າຍໄປ [23]ເພາະວ່າຄົນຂອງ ອຳໂມນ ແລະຂອງ ໂມອາບ ໄດ້ລຸກຂຶ້ນຕໍ່ສູ້ກັບຊາວພູເຂົາ ເສ-
ອີ ທຳລາຍພວກເຂົາເສຍຢ່າງສິ້ນເຊີງ ແລະເມື່ອພວກເຂົາທຳລາຍຊາວ ເສອີ ໝົດແລ້ວ ພວກ
ເຂົາກໍທຳລາຍກັນເອງ [24]ເມື່ອ ຢູດາ ຂຶ້ນໄປຢູ່ທີ່ຫໍຄອຍໃນຖິ່ນແຫ້ງແລ້ງກັນດານ ແລ້ວເບິ່ງຊີ້ໄປທີ່
ຄົນໝູ່ໃຫຍ່ນັ້ນ ເບິ່ງແມ ມີແຕ່ສົບນອນຢູ່ເທິງແຜ່ນດິນ ບໍ່ມີຈັກຄົນດຽວທີ່ລອດພົ້ນໄປໄດ້ [25]ເມື່ອ
ເຢໂຮຊາຟັດ ແລະປະຊາຊົນຂອງພະອົງມາເກັບເຄື່ອງທີ່ຍຶດໄດ້ ພ້ອມກັບສົບທັງຫລາຍນັ້ນເຂົາ
ພົບສິ່ງຂອງເປັນຈຳນວນຫລາຍ ທັງຊັບສົມບັດ ແລະເພັດພອຍຕ່າງໆຊຶ່ງພວກເຂົາເກັບມາສຳ-
ລັບຕົວຈົນຂົນໄປບໍ່ໄຫວ ພວກເຂົາເກັບເຄື່ອງທີ່ຍຶດໄດ້ນັ້ນສາມມື້ ເພາະຫລາຍເຫລືອເກີນ

## ເຢໂຮຊາຟັດສະເດັດກັບໄປເຢຣູຊາເລັມຢ່າງມີໄຊ

[26]ໃນມື້ທີສີ່ ພວກເຂົາທັງຫລາຍໄດ້ຊຸມນຸມກັນທີ່ພູເຂົາ ເບຣາກາ ໃນບ່ອນນັ້ນ ພວກເຂົາໄດ້
ສັນລະເສີນ ພຣະຜູ້ເປັນເຈົ້າ ສະຖານທີ່ນັ້ນຈຶ່ງຖືກເອີ້ນວ່າ ພູເຂົາ ເບຣາກາ ຈົນເຖິງທຸກມື້ນີ້
[27]ຄົນ ຢູດາ ແລະ ເຢຣູຊາເລັມ ທຸກຄົນ ແລະ ເຢໂຮຊາຟັດ ຊົງນຳໜ້າ ກັບໄປໃນ ເຢຣູຊາເລັມ

ດ້ວຍຄວາມຊື່ນບານ ເພາະ ພຣະຜູ້ເປັນເຈົ້າ ໄດ້ຊົງກະທຳໃຫ້ພວກເຂົາຊື່ນຊົມຍິນດີເຍາະເຍີ້ຍ
ສັດຕູຂອງຕົນ [28]ພວກເຂົາເຂົ້າມາໃນ ເຢຣູຊາເລັມ ດ້ວຍພິນໃຫຍ່ ພິນຄູ່ ແລະແກ ມາຫາພຣະວິ-
ຫານຂອງ ພຣະຜູ້ເປັນເຈົ້າ [29]ຄວາມຢຳເກງ ພຣະເຈົ້າ ກໍຢູ່ເໜືອບັນດາລາຊະອານາຈັກຂອງປະ-
ເທດທັງປວງ ເມື່ອເຂົາໄດ້ຍິນວ່າ ພຣະຜູ້ເປັນເຈົ້າ ຊົງຕໍ່ສູ້ສັດຕູຂອງ ອິສຣາເອນ [30]ດິນແດນຂອງ
ເຢໂຮຊາຟັດ ຈຶ່ງສະຫງົບງຽບ ເພາະວ່າ ພຣະເຈົ້າ ຂອງພະອົງຊົງປະທານໃຫ້ພະອົງມີຄວາມສະ-
ຫງົບຢູ່ຮອບດ້ານ

[31]ດັ່ງນີ້ແຫລະ ເຢໂຮຊາຟັດ ຊົງປົກຄອງຢູ່ເໜືອ ຢູດາ ເມື່ອພະອົງຊົງເລີ່ມປົກຄອງນັ້ນ ພະອົງ
ມີອາຍຸສາມສິບຫ້າປີ ແລະພະອົງຊົງປົກຄອງໃນ ເຢຣູຊາເລັມ ຊາວຫ້າປີ ພະມານດາຂອງພະອົງ
ຊົງພະນາມວ່າ ອາຊູບາ ລູກສາວ ຊິນຣີ [32]ພະອົງຊົງດຳເນີນຕາມວິທີຂອງ ອາຊາ ພໍ່ຂອງພະອົງ
ແລະບໍ່ໄດ້ຊົງຫັນເຫໄປຈາກທາງນັ້ນ ພະອົງຊົງກະທຳສິ່ງທີ່ຊອບໃນສາຍພຣະເນດຂອງ ພຣະຜູ້-
ເປັນເຈົ້າ [33]ຢ່າງໃດກໍດີ ປູຊະນີຍະສະຖານສູງຍັງບໍ່ໄດ້ຖືກກຳຈັດອອກໄປ ປະຊາຊົນຍັງບໍ່ໄດ້
ປັກໃຈໃນ ພຣະເຈົ້າ ແຫ່ງບັນພະບູລຸດຂອງຕົນ

[34]ສ່ວນພະລາຊະກິດນອກນັ້ນຂອງ ເຢໂຮຊາຟັດ ຕັ້ງແຕ່ຕົ້ນຈົນເຖິງທີ່ສຸດ ໄດ້ມີບັນທຶກໄວ້ໃນ
ໜັງສືຂອງ ເຢຮູ ລູກຊາຍ ຮານານີ ຊຶ່ງລວມເຂົ້າໃນໜັງສືຂອງກະສັດແຫ່ງ ອິສຣາເອນ

### ເຢໂຮຊາຟັດຊົງເປັນພັນທະມິດກັບອາຮາຊີຢາກະສັດຂອງອິສຣາເອນທີ່ຊົ່ວ[ກ]

[35]ຕໍ່ມາພາຍຫລັງ ເຢໂຮຊາຟັດ ກະສັດຂອງ ຢູດາ ໄດ້ຊົງຮ່ວມງານກັບ ອາຮາຊີຢາ ກະສັດຂອງ
ອິສຣາເອນ ຜູ້ຊົງກະທຳໃນສິ່ງທີ່ຊົ່ວຮ້າຍຫລາຍ [36]ພະອົງຊົງຮ່ວມງານໃນເລື່ອງການສ້າງເຮືອໄປ
ຫາເມືອງ ຕາຊິດ ແລະໄດ້ສ້າງເຮືອໃນ ເອັດຊີໂອນ-ເກເບ [37]ແລ້ວ ເອລີເອເຊ ລູກຊາຍ ໂດດາວາຮູ
ແຫ່ງເມືອງ ມາເຣຊາ ໄດ້ທຳນວາຍເຖິງ ເຢໂຮຊາຟັດ ວ່າ “ເພາະພະອົງ ຊົງຮ່ວມງານກັບ ອາຮາຊີ-
ຢາ ພຣະຜູ້ເປັນເຈົ້າ ຈະຊົງທຳລາຍສິ່ງທີ່ພະອົງເຮັດ” ເຮືອກໍແຕກບໍ່ສາມາດໄປເມືອງ ຕາຊິດ ໄດ້

# ບົດທີ 21

## ເຢໂຮຣາມປົກຄອງເໜືອຢູດາ

[1]ເຢໂຮຊາຟັດ ກໍລ່ວງຫລັບໄປຢູ່ກັບບັນພະບູລຸດຂອງພະອົງ ພວກເຂົາຝັງພະສົບໄວ້ກັບບັນ-
ພະບູລຸດຂອງພະອົງໃນນະຄອນ ດາວິດ ແລະ ເຢໂຮຣາມ ລູກຊາຍຂອງພະອົງປົກຄອງແທນ

[2]ພະອົງຊົງມີນ້ອງຊາຍ ຜູ້ເປັນລູກຊາຍຂອງ ເຢໂຮຊາຟັດ ຄື ອາຊາຣີຢາ ເຢຮີເອນ ເຊຄາຣີ-
ຢາ ອາຊາຣີຢາ ມີກາເອນ ເຊຟາຕີຢາ ພວກເຫລົ່ານີ້ທັງໝົດເປັນລູກຊາຍຂອງ ເຢໂຮຊາຟັດ
ກະສັດຂອງ ອິສຣາເອນ [3]ພໍ່ຂອງພວກເຂົາປະທານເງິນ ຄຳ ແລະເຄື່ອງຂອງອັນມີຄ່າຫລວງ-
ຫລາຍພ້ອມກັບຫົວເມືອງທີ່ມີປ້ອມໃນ ຢູດາ ແຕ່ພະອົງປະທານລາຊະອານາຈັກແກ່ ເຢໂຮຣາມ
ເພາະວ່າເພິ່ນເປັນລູກຊາຍຫົວປີ

[4]ເມື່ອ ເຢໂຮຣາມ ໄດ້ຂຶ້ນປົກຄອງລາຊະອານາຈັກຂອງພະບິດາທີ່ໄດ້ສະຖາປະນາໄວ້ແລ້ວ ພະ
ອົງຊົງປະຫານນ້ອງຊາຍຂອງພະອົງຈົນໝົດດ້ວຍດາບ ທັງເຈົ້ານາຍບາງຄົນຂອງ ອິສຣາເອນ

[ກ]1 ປະຫວັດກະສັດ 22:47-49

ດ້ວຍ 5ເມື່ອ ເຢໂຮຣາມ ຊົງເລີ່ມປົກຄອງນັ້ນ ພະອົງມີອາຍຸສາມສິບສອງປີ ແລະຊົງປົກຄອງໃນ
ເຢຣູຊາເລັມ ແປດປີ 6ພະອົງຊົງດຳເນີນຕາມເສັ້ນທາງຂອງບັນດາກະສັດແຫ່ງ ອິສຣາເອນ ຕາມ
ຄືທີ່ລາຊະວົງ ອາຮາບ ກະທຳ ເພາະວ່າທິດາຂອງ ອາຮາບ ເປັນມະເຫສີຂອງພະອົງ ແລະພະອົງ
ຊົງກະທຳສິ່ງທີ່ຊົ່ວຮ້າຍໃນສາຍພຣະເນດ ພຣະຜູ້ເປັນເຈົ້າ 7ຢ່າງໃດກໍດີ ພຣະຜູ້ເປັນເຈົ້າຈະບໍ່
ຊົງທຳລາຍເຊື້ອສາຍຂອງ ດາວິດ ເພາະເຫດຄຳໝັ້ນສັນຍາຊຶ່ງພະອົງຊົງ ກະທຳໄວ້ກັບ ດາວິດ
ແລະເຫດທີ່ພະອົງຊົງສັນຍາວ່າຈະປະທານຕະກຽງແກ່ ດາວິດ ແລະແກ່ລູກຫລານຂອງພະອົງ
ເປັນນິດ

## ຄົນເອໂດມໄດ້ກະບົດ[ກ]

8ໃນລາຊະການຂອງພະອົງ ເອໂດມ ໄດ້ກະບົດອອກຈາກການປົກຄອງຂອງຢູດາ ແລະຕັ້ງ
ກະສັດຂຶ້ນເໜືອຕົນ 9ແລ້ວ ເຢໂຮຣາມ ກໍສະເດັດອອກໄປພ້ອມກັບບັນດາເຈົ້ານາຍ ແລະລົດຮົບ
ທັງໝົດຂອງພະອົງ ພະອົງຊົງລຸກຂຶ້ນໃນກາງຄືນ ໂຈມຕີຄົນ ເອໂດມ ທີ່ມາອ້ອມພະອົງ ແລະຜູ້
ບັງຄັບບັນຊາລົດຮົບໄວ້ 10ເອໂດມ ຈຶ່ງໄດ້ກະບົດອອກຈາກການປົກຄອງຂອງ ຢູດາ ຈົນທຸກມື້ນີ້
ເທື່ອນັ້ນ ລິບນາ ກໍໄດ້ກະບົດອອກຈາກການປົກຄອງຂອງພະອົງດ້ວຍ ເພາະວ່າພະອົງໄດ້ຊົງປະ
ຖິ້ມ ພຣະຜູ້ເປັນເຈົ້າ ພຣະເຈົ້າ ແຫ່ງບັນພະບູລຸດຂອງພະອົງ 11ຫລາຍກວ່ານັ້ນອີກ ພະອົງຊົງ
ສ້າງປູຊະນີຍະສະຖານສູງໃນພູເຂົາຂອງຢູດາ ແລະຊົງນຳຊາວ ເຢຣູຊາເລັມ ໄປໃນທາງທີ່ບໍ່ສັດ-
ຊື່ຕໍ່ ພຣະເຈົ້າ ແລະຊົງກະທຳໃຫ້ຢູດາຫລົງຜິດໄປ

## ກ່ອນເອລີຢາຂຶ້ນສະຫວັນ ເພິ່ນໄດ້ຂຽນຄຳທຳນວາຍເຖິງເຢໂຮຣາມ

12ແລະ ຈົດໝາຍ ສະບັບ ໜຶ່ງ ມາ ເຖິງ ພະ ອົງ ຈາກ ເອລີຢາ ຜູ້ທຳນວາຍ ວ່າ “ພຣະຜູ້ເປັນເຈົ້າ
ພຣະເຈົ້າຂອງ ດາວິດ ບັນພະບູລຸດຂອງພະອົງ ກ່າວດັ່ງນີ້ວ່າ ‘ເພາະເຈົ້າບໍ່ໄດ້ດຳເນີນໃນບັນ-
ດາເສັ້ນທາງຂອງ ເຢໂຮຊາຟັດ ພໍ່ຂອງເຈົ້າ ຫລືໃນບັນດາເສັ້ນທາງຂອງ ອາຊາ ກະສັດຂອງຢູດາ
13ແຕ່ໄດ້ເດີນໃນເສັ້ນທາງຂອງບັນດາກະສັດ ແຫ່ງ ອິສຣາເອນ ແລະໄດ້ນຳຢູດາກັບຊາວ ເຢຣູ-
ຊາເລັມ ໄປໃນທາງທີ່ບໍ່ສັດຊື່ຕໍ່ ພຣະເຈົ້າ ຄືກັບລາຊະວົງ ອາຮາບ ແລະເຈົ້າໄດ້ຂ້າພວກນ້ອງຊາຍ
ຂອງເຈົ້າ ຜູ້ເປັນເຊື້ອວົງພໍ່ຂອງເຈົ້າ ທັງທີ່ພວກເຂົາດີກວ່າເຈົ້າ 14ເບິ່ງແມ ພຣະຜູ້ເປັນເຈົ້າຈະ
ຊົງນຳໄພພິບັດອັນຍິ່ງໃຫຍ່ມາເໜືອຊົນຊາດຂອງເຈົ້າ ລູກຫລານຂອງເຈົ້າ ເມຍຂອງເຈົ້າ ແລະ
ສິ່ງຂອງທັງໝົດຂອງເຈົ້າ 15ແລະຕົວເຈົ້າເອງຈະມີຄວາມເຈັບປ່ວຍສາຫັດດ້ວຍພະຍາດລຳໄສ້
ຂອງເຈົ້າ ຈົນກວ່າລຳໄສ້ຂອງເຈົ້າຈະອອກມາ ເພາະເຫດພະຍາດນັ້ນນັບມື້ນັບຮ້າຍແຮງ’”

16ຫລາຍກວ່ານັ້ນ ພຣະຜູ້ເປັນເຈົ້າ ຊົງເຮັດໃຫ້ຄວາມຮ້າຍຂອງຄົນ ຟີລິດສະຕິນ ແລະຂອງ
ຄົນ ອາຫລັບ ຜູ້ຢູ່ໃກ້ກັບຄົນ ເອທີໂອເປຍ ທີ່ມີຕໍ່ ເຢໂຮຣາມ 17ພວກເຂົາທັງຫລາຍຍົກທັບມາຕໍ່ສູ້
ກັບ ຢູດາ ແລະບຸກລຸກເຂົ້າໄປໃນນັ້ນ ແລະຂົນສິ່ງຂອງທັງໝົດທີ່ມີໃນລາຊະສຳນັກ ທັງບັນດາ
ລູກຊາຍ ແລະມະເຫສີຂອງພະອົງ ຈຶ່ງບໍ່ມີລູກຊາຍເຫລືອໄວ້ໃຫ້ແກ່ພະອົງນອກຈາກ ເຢໂຮອາ-
ຮາດ ລູກຊາຍອົງສຸດທ້າຍຂອງພະອົງ

[ກ]2 ປະຫວັດກະສັດ 8:20-22

## ເຢໂຮຣາມເປັນພະຍາດຊື່ງຮັກສາບໍ່ໄດ້

[18]ພາຍຫລັງເລື່ອງເຫລົ່ານີ້ ພຣະຜູ້ເປັນເຈົ້າຊົງເຮັດໃຫ້ລຳໄສ້ຂອງ ເຢໂຮຣາມ ເປັນພະຍາດຊຶ່ງ
ຮັກສາບໍ່ໄດ້ [19]ຕໍ່ມາເປັນເວລາຄົບສອງປີລຳໄສ້ຂອງພະອົງກໍອອກມາເພາະພະຍາດນັ້ນ ແລະພະ
ອົງກໍສິ້ນພະຊົນດ້ວຍ ຄວາມທຸກທໍລະມານຢ່າງຍິ່ງ ປະຊາຊົນຂອງພະອົງບໍ່ໄດ້ກໍ່ແປວໄຟຖວາຍ
ກຽດແກ່ພະອົງ ຄືກັບທີ່ໄດ້ກໍ່ແປວໄຟໃຫ້ກັບບັນພະບູລຸດຂອງພະອົງ
[20]ເມື່ອພະອົງຊົງເລີ່ມປົກຄອງນັ້ນ ພະອົງມີອາຍຸສາມສິບສອງປີ ແລະຊົງປົກຄອງໃນ ເຢຣູຊາ-
ເລັມ ແປດປີ ພະອົງໄດ້ຊົງຈາກໄປໂດຍບໍ່ມີໃຜອາໄລ ພວກເຂົາຝັງພະສົບໄວ້ໃນນະຄອນ ດາວິດ
ແຕ່ບໍ່ແມ່ນໃນຊຸມຝັງສົບຂອງບັນດາກະສັດ

# ບົດທີ 22

## ອາຮາຊີຢາເປັນກະສັດເໜືອຢູດາ[ກ]

[1]ແລະຊາວ ເຢຣູຊາເລັມ ໄດ້ໃຫ້ ອາຮາຊີຢາ ລູກຊາຍອົງສຸດທ້າຍຂອງພະອົງ ເປັນກະສັດ ແທນ
ພະອົງ ເພາະຄົນໝູ່ນັ້ນມາເຖິງຄ້າຍກັບຄົນ ອາຫລັບ ໄດ້ຂ້າລູກຊາຍຜູ້ເປັນອ້າຍເສຍທັງໝົດ ດັ່ງ-
ນັ້ນ ອາຮາຊີຢາ ລູກຊາຍຂອງ ເຢໂຮຣາມ ກະສັດຂອງ ຢູດາ ຈຶ່ງຂຶ້ນປົກຄອງ [2]ເມື່ອ ອາຮາຊີຢາ ເລີ່ມ
ປົກຄອງນັ້ນ ພະອົງມີອາຍຸສີ່ສິບສອງປີ ແລະຊົງປົກຄອງໃນ ເຢຣູຊາເລັມ ໜຶ່ງປີ ພະມານດາ
ຂອງພະອົງຊົງພະນາມວ່າ ນາງ ອາທາລີຢາ ຫລານຂອງ ອົມຣີ [3]ພະອົງຊົງດຳເນີນໃນທາງທັງ-
ຫລາຍແຫ່ງລາຊະວົງຂອງ ອາຮາບ ດ້ວຍ ເພາະວ່າພະມານດາຂອງພະອົງເປັນທີ່ປຶກສາໃນການ
ເຮັດຄວາມຊົ່ວຮ້າຍຂອງພະອົງ [4]ພະອົງຊົງ ເຮັດສິ່ງທີ່ຊົ່ວຮ້າຍໃນສາຍພຣະເນດຂອງ ພຣະຜູ້-
ເປັນເຈົ້າ ຄືກັບລາຊະວົງຂອງ ອາຮາບ ໄດ້ເຮັດ ເພາະວ່າຫລັງຈາກພະບິດາຂອງພະອົງສິ້ນພະຊົນ
ແລ້ວ ພວກເຂົາທັງຫລາຍກໍເປັນທີ່ປຶກສາຂອງພະອົງ ນຳໄປສູ່ຄວາມຈິບຫາຍຂອງພະອົງ

## ອາຮາຊີຢາເຂົ້າຮ່ວມກັບເຢໂຮຣາມໃນການສູ້ຮົບທີ່ເມືອງຣາໂມດ-ກິເລອາດ[ຂ]

[5]ພະອົງຊົງປະຕິບັດຕາມຄຳປຶກສາຂອງພວກເຂົາ ແລະສະເດັດໄປກັບ ເຢໂຮຣາມ ລູກຊາຍ
ຂອງ ອາຮາບ ກະສັດ ແຫ່ງ ອິສຣາເອນ ເພື່ອເຮັດສົງຄາມກັບ ຮາຊາເອນ ກະສັດຂອງ ຊີເຣຍ ທີ່
ເມືອງ ຣາໂມດ-ກິເລອາດ ແລະຄົນ ຊີເຣຍ ໄດ້ເຮັດໃຫ້ ໂຢຣາມ ບາດເຈັບ [6]ພະອົງຊົງກັບມາທີ່
ເຢດຊະເຣເອນ ເພື່ອຮັກສາບາດແຜຊຶ່ງພະອົງໄດ້ຮັບທີ່ເມືອງ ຣາມາ ພະອົງຊົງຕໍ່ສູ້ກັບ ຮາຊາ-
ເອນ ກະສັດຂອງຊີເຣຍ ແລ້ວ ອາຊາຣີຢາ ລູກຊາຍຂອງ ເຢໂຮຣາມ ກະສັດຂອງ ຢູດາ ສະເດັດ
ລົງໄປເຝົ້າ ເຢໂຮຣາມ ລູກຊາຍຂອງ ອາຮາບ ໃນ ເມືອງ ເຢດຊະເຣເອນ ເພາະວ່າພະອົງປ່ວຍ
ໜັກ
[7]ແຕ່ ພຣະເຈົ້າ ຊົງກຳນົດໄວ້ແລ້ວວ່າ ຄວາມຫລົ້ມຈົມຂອງ ອາຮາຊີຢາ ຈະມາໂດຍທີ່ພະອົງ
ສະເດັດລົງໄປຢ້ຽມ ໂຢຣາມ ເພາະເມື່ອພະອົງສະເດັດໄປບ່ອນນັ້ນ ພະອົງສະເດັດອອກໄປກັບ
ເຢໂຮຣາມ ເພື່ອຈະປະທະກັບ ເຢຣູ ລູກຊາຍ ນິມຊີ ຜູ້ຊຶ່ງ ພຣະຜູ້ເປັນເຈົ້າ ໄດ້ຊົງຕັ້ງໄວ້ໃຫ້ຕັດ

---

[ກ]2 ປະຫວັດກະສັດ 8:24-26
[ຂ]2 ປະຫວັດກະສັດ 8:28 [ຂ]2 ປະຫວັດກະສັດ 11:13

ລາຊະວົງຂອງ ອາຣາບ ອອກເສຍ [8]ແລະຢູ່ມາເມື່ອ ເຢຮູ ກຳລັງສຳເລັດໂທດລາຊະວົງຂອງ ອາ-
ຣາບ ເພິ່ນໄດ້ພົບເຈົ້ານາຍຂອງຢູດາ ແລະບັນດາລູກຊາຍອ້າຍຂອງ ອາຮາຊີຢາ ຜູ້ມາບົວລະບັດ
ອາຮາຊີຢາ ເພິ່ນກໍໄດ້ປະຫານພວກເຂົາທັງຫລາຍເສຍ [9]ເພິ່ນໄດ້ຄົ້ນຫາ ອາຮາຊີຢາ ແລະພະ
ອົງກໍຖືກຈັບ (ຕອນທີ່ລີ້ພະອົງຢູ່ໃນ ຊາມາເຣຍ) ພວກເຂົາພາພະອົງມາຫາ ເຢຮູ ເພື່ອປະຫານຊີ-
ວິດພະອົງເສຍ ພວກເຂົາກໍຝັງພະສົບໄວ້ ໂດຍກ່າວວ່າ "ພະອົງຊົງເປັນຫລານຂອງ ເຢໂຮຊາຟັດ
ຜູ້ສະແຫວງຫາ ພຣະຜູ້ເປັນເຈົ້າ ດ້ວຍສິ້ນສຸດພະໄທຂອງພະອົງ" ແລະລາຊະວົງຂອງ ອາຮາຊີຢາ
ບໍ່ມີຜູ້ໃດສາມາດປົກຄອງລາຊະອານາຈັກໄດ້

[10]ເມື່ອ ອາທາລີຢາ ແມ່ຂອງ ອາຮາຊີຢາ ເຫັນວ່າລູກຊາຍຂອງພະນາງສິ້ນພະຊົນແລ້ວ ພະນາງ
ກໍລຸກຂຶ້ນທຳລາຍ ເຊື້ອພະວົງ ແຫ່ງລາຊະວົງຂອງ ຢູດາ ຈົນໝົດ [11]ແຕ່ພະນາງ ເຢໂຮຊາບາ ລູກ
ສາວຂອງກະສັດໄດ້ນຳ ໂຢອາດ ລູກຊາຍຂອງ ອາຮາຊີຢາ ໄປເສຍຈາກທ່າມກາງບັນດາລູກຊາຍ
ຂອງກະສັດ ຜູ້ຊຶ່ງຈະຕ້ອງຖືກປະຫານ ແລະພະນາງກໍເຊື່ອງ ໂຢອາດ ທັງຜູ້ລ້ຽງຂອງນາງໄວ້ໃນ
ຫ້ອງພຣະວິຫານ ດັ່ງນັ້ນແຫລະ ເຢໂຮຊາບາ ລູກສາວຂອງກະສັດ ເຢໂຮຣາມ ແລະເມຍຂອງ
ປະໂລຫິດ ເຢໂຮຢາດາ (ເພາະວ່າພະນາງເປັນນ້ອງສາວຂອງ ອາຮາຊີຢາ) ໄດ້ເຊື່ອງ ໂຢອາດ ໃຫ້
ພົ້ນ ຈາກພະນາງ ອາທາລີຢາ ເພື່ອບໍ່ໃຫ້ພະນາງປະຫານ ໂຢອາດ ໄດ້ [12]ແລະ ໂຢອາດ ໄດ້ຢູ່ກັບ
ນາງ ໃນພຣະວິຫານຂອງ ພຣະເຈົ້າ ເຊື່ອງຕົວຢູ່ຫົກປີ ຝ່າຍພະນາງ ອາທາລີຢາ ກໍໄດ້ປົກຄອງ
ແຜ່ນດິນ

# ບົດທີ 23

## ເຊື້ອພະວົງແຫ່ງຢູດາຖືກທຳລາຍ ນອກຈາກໂຢອາດ[ຂ]

[1]ແຕ່ໃນປີທີເຈັດ ເຢໂຮຢາດາ ໄດ້ກ້າແຂງຂຶ້ນ ແລະໃຫ້ພວກນາຍຮ້ອຍເຮັດຄຳໝັ້ນສັນຍາກັບ
ຕົນ ມີອາຊາຣີຢາ ລູກຊາຍ ເຢໂຮຣາມ ອິດຊະມາເອນ ລູກຊາຍ ເຢໂຮຮານັນ ອາຊາຣີຢາ ລູກ
ຊາຍ ໂອເບັດ ມາອາເສຢາ ລູກຊາຍ ອາດາຢາ ແລະ ເອລີຊາຟັດ ລູກຊາຍ ຊິກຣີ [2]ພວກເຂົາທັງ-
ຫລາຍທ່ຽວໄປທົ່ວ ຢູດາ ແລະຮວບຮວມຄົນ ເລວີ ມາຈາກທຸກຫົວເມືອງຂອງ ຢູດາ ທັງບັນດາ
ຫົວໜ້າຂອງບັນພະບູລຸດຂອງ ອິສຣາເອນ ມາຍັງ ເຢຣູຊາເລັມ [3]ແລະບັນດາຊຸມນຸມຊົນທັງໝົດກໍ
ເຮັດຄຳໝັ້ນສັນຍາກັບກະສັດໃນພຣະວິຫານຂອງ ພຣະເຈົ້າ ແລະ ເຢໂຮຢາດາ ກ່າວແກ່ພວກເຂົາ
ທັງຫລາຍວ່າ "ເບິ່ງແມ ລູກຊາຍຂອງກະສັດຈະປົກຄອງຕາມທີ່ ພຣະຜູ້ເປັນເຈົ້າ ກ່າວກ່ຽວກັບ
ບັນດາລູກຊາຍຂອງ ດາວິດ [4]ທ່ານທັງຫລາຍຈົ່ງເຮັດຢ່າງນີ້ ຄືທ່ານຜູ້ເປັນປະໂລຫິດແລະຄົນ ເລ-
ວີ ຜູ້ອອກເວນຍາມໃນວັນສະບາໂຕໜຶ່ງໃນສາມ ໃຫ້ເປັນຄົນເຝົ້າປະຕູ [5]ແລະໜຶ່ງໃນສາມໃຫ້ຢູ່
ທີ່ພະລາຊະສຳນັກ ແລະໜຶ່ງໃນສາມໃຫ້ຢູ່ທີ່ປະຕູໂຂງ ແລະໃຫ້ປະຊາຊົນທັງປວງຢູ່ໃນເດີ່ນ
ພຣະວິຫານຂອງ ພຣະຜູ້ເປັນເຈົ້າ [6]ແຕ່ຢ່າໃຫ້ຈັກຄົນໜຶ່ງ ເຂົ້າໄປໃນພຣະວິຫານຂອງ ພຣະຜູ້-
ເປັນເຈົ້າ ນອກຈາກປະໂລຫິດ ແລະຄົນ ເລວີ ທີ່ບົວລະບັດຢູ່ ພວກເຂົາທັງຫລາຍເຂົ້າໄປໄດ້
ເພາະພວກ ເຂົາບໍລິສຸດ ແຕ່ປະຊາຊົນທັງປວງຈະຕ້ອງຮັກສາການບັງຄັບບັນຊາຂອງ ພຣະຜູ້-
ເປັນເຈົ້າ [7]ໃຫ້ຄົນ ເລວີ ອ້ອມກະສັດໄວ້ ແຕ່ລະຄົນໃຫ້ຖືອາວຸດ ແລະຜູ້ໃດເຂົ້າໄປໃນພຣະວິຫານ

ນັ້ນຈະຕ້ອງຖືກປະຫານ ຈົ່ງຢູ່ກັບກະສັດເມື່ອພະອົງສະເດັດເຂົ້າມາ ແລະເມື່ອພະອົງສະເດັດ
ອອກໄປ"
[8]ຄົນ ເລວີ ແລະຄົນຢູດາທັງປວງໄດ້ເຮັດທຸກສິ່ງທີ່ປະໂລຫິດ ເຢໂຮຢາດາໄດ້ບັນຊາໄວ້ ພວກ
ເຂົາຕ່າງກໍນຳຄົນຂອງຕົນມາ ຄືທັງຄົນທີ່ອອກເວນຍາມໃນວັນສະບາໂຕ ແລະບັນດາຄົນເຫລົ່າ-
ນັ້ນທີ່ຈະເຂົ້າເວນຍາມ ໃນວັນສະບາໂຕ ເພາະ ເຢໂຮຢາດາບໍ່ໄດ້ປ່ອຍກອງເວນຍາມ [9]ແລະ ເຢ-
ໂຮຢາດາປະໂລຫິດໄດ້ມອບຫອກກັບຫອກ ແລະໂລ່ຊຶ່ງເປັນຂອງກະສັດ ດາວິດທີ່ຢູ່ໃນພຣະວິ-
ຫານຂອງ ພຣະເຈົ້າ ໃຫ້ຜູ້ບັງຄັບບັນຊາກອງຮ້ອຍ [10]ແລະໄດ້ຕັ້ງປະຊາຊົນທັງໝົດໃຫ້ອ້ອມກະ-
ສັດໄວ້ ທຸກຄົນຖືອາວຸດຕັ້ງແຕ່ດ້ານຂວາຂອງພຣະວິຫານຮອດດ້ານຊ້າຍຂອງພຣະວິຫານ ຮອບ
ແທ່ນບູຊາ ແລະພຣະວິຫານ [11]ແລ້ວພວກເຂົານຳລູກຊາຍຂອງກະສັດອອກມາ ແລະສຸບມົງກຸດ
ໃຫ້ພະອົງ ມອບພະໂອວາດໃຫ້ແກ່ພະອົງ ແລະຕັ້ງພະອົງໄວ້ເປັນກະສັດ ເຢໂຮຢາດາກັບລູກ
ຊາຍຂອງເພິ່ນກໍເຈີມພະອົງ ແລະຮ້ອງວ່າ "ຂໍກະສັດຊົງພະຈະເລີນ"

## ໂຢອາດເປັນກະສັດເໜືອຢູດາ[ກ]

[12]ເມື່ອ ອາທາລີຢາ ໄດ້ຍິນສຽງປະຊາຊົນແລ່ນ ແລະສັນລະເສີນກະສັດ ພະນາງກໍສະເດັດ
ເຂົ້າໄປຫາປະຊາຊົນ ໃນພຣະວິຫານຂອງ ພຣະຜູ້ເປັນເຈົ້າ [13]ແລະ ເມື່ອພະນາງທອດພະເນດ
ເບິ່ງແມ ມີກະສັດປະທັບຢືນຢູ່ທີ່ເສົາຂອງພະອົງຊື່ທາງເຂົ້າ ບັນດາຜູ້ບັງຄັບກອງທັບ ແລະທະ-
ຫານເປົ່າແກກໍຢູ່ຂ້າງກະສັດ ແລະປະຊາຊົນທັງປວງ ແຫ່ງແຜ່ນດິນ ກໍຊົມຊື່ນຍິນດີ ແລະເປົ່າ
ແກບັນດານັກຮ້ອງພ້ອມກັບເຄື່ອງດົນຕີຂອງພວກເຂົາກໍນຳການສັນລະເສີນ ພະນາງ ອາທາລີຢາ
ກໍຈີກເສື້ອຜ້າຂອງພະນາງ ຊົງຮ້ອງວ່າ "ກະບົດ ກະບົດ" [14]ແລ້ວປະໂລຫິດ ເຢໂຮຢາດາ ຈຶ່ງນຳ
ບັນດານາຍຮ້ອຍຜູ້ບັນຊາການກອງທັບອອກມາ ສັ່ງພວກເຂົາວ່າ "ຈົ່ງຄຸມຕົວພະນາງອອກມາ
ລະຫວ່າງແຖວທະຫານ ຜູ້ໃດທີ່ຕາມພະນາງໄປກໍໃຫ້ປະຫານຊີວິດເສຍດ້ວຍດາບ" ເພາະປະ-
ໂລຫິດກ່າວວ່າ "ຢ່າປະຫານພະນາງໃນພຣະວິຫານຂອງ ພຣະຜູ້ເປັນເຈົ້າ" [15]ພວກເຂົາຈຶ່ງຈັບ
ພະນາງ ແລ້ວພະນາງກໍສະເດັດໄປທີ່ທາງເຂົ້າປະຕູຄອກມ້າໃນພະລາຊະວັງ ແລ້ວຖືກປະຫານ
ເສຍບ່ອນນັ້ນ

## ການປະຫານຊີວິດຂອງພະນາງອາທາລີຢາຜູ້ທີ່ຊົ່ວຮ້າຍ[ຂ]

[16]ເຢໂຮຢາດາ ໄດ້ເຮັດຄຳໝັ້ນສັນຍາລະຫວ່າງເພິ່ນເອງກັບປະຊາຊົນທັງປວງ ແລະກະສັດວ່າ
ພວກເຂົາທັງຫລາຍຈະເປັນປະຊາຊົນຂອງ ພຣະຜູ້ເປັນເຈົ້າ [17]ແລ້ວປະຊາຊົນທັງປວງກໍໄປທີ່ວິ-
ຫານຂອງ ພະບາອານ ເພື່ອທຳລາຍເສຍ ແລະທຸບແທ່ນບູຊາກັບຮູບເຄົາລົບຂອງ ພະບາອານ
ນັ້ນໃຫ້ເປັນປ່ຽງໆ ພວກເຂົາປະຫານປະໂລຫິດ ມັດຕານ ຂອງ ພະບາອານ ເສຍຕໍ່ໜ້າແທ່ນບູຊາ
[18]ເຢໂຮຢາດາ ວາງເວນຍາມໄວ້ເບິ່ງແຍງພຣະວິຫານຂອງ ພຣະຜູ້ເປັນເຈົ້າ ພາຍໃຕ້ການຄວບຄຸມ
ຂອງປະໂລຫິດ ແຫ່ງຄົນ ເລວີ ຜູ້ທີ່ ດາວິດ ຊົງຈັດຕັ້ງໃຫ້ເບິ່ງແຍງພຣະວິຫານຂອງ ພຣະຜູ້ເປັນ-
ເຈົ້າ ໃຫ້ຖວາຍເຄື່ອງເຜົາບູຊາແກ່ ພຣະຜູ້ເປັນເຈົ້າ ຕາມທີ່ບັນທຶກໄວ້ໃນພຣະບັນຍັດຂອງ ໂມເຊ

---

[ກ]2 ປະຫວັດກະສັດ 11:4-12
[ຂ]2 ປະຫວັດກະສັດ 11:13-16 [ຂ]2 ປະຫວັດກະສັດ 11:17-20 [ຄ]2 ປະຫວັດກະສັດ 12:13

ດ້ວຍຄວາມຊົມຊື່ນຍິນດີ ແລະການຮ້ອງເພງ ຕາມຄຳສັ່ງຂອງ ດາວິດ [19]ເພິ່ນໄດ້ຕັ້ງຜູ້ເຝົ້າປະຕູ
ໄວ້ທີ່ປະຕູຮົ້ວພຣະວິຫານຂອງ ພຣະຜູ້ເປັນເຈົ້າ ເພື່ອບໍ່ໃຫ້ຜູ້ມີມົນທິນດ້ວຍປະການໜຶ່ງປະການ
ໃດເຂົ້າໄປ [20]ເພິ່ນໄດ້ນຳຜູ້ບັງຄັບກອງຮ້ອຍ ຂ້າລາຊະການ ຜູ້ປົກຄອງປະຊາຊົນ ແລະບັນດາ
ປະຊາຊົນແຫ່ງແຜ່ນດິນ ແລະໄດ້ເຊີນກະສັດລົງມາຈາກພຣະວິຫານຂອງ ພຣະຜູ້ເປັນເຈົ້າໄປ
ທາງປະຕູເທິງ ໄປສູ່ພະລາຊະສຳນັກ ແລະໄດ້ເຊີນກະສັດປະທັບເທິງພະລາຊະບັນລັງແຫ່ງລາ-
ຊະອານາຈັກ [21]ບັນດາປະຊາຊົນແຫ່ງແຜ່ນດິນກໍປິຕິຍິນດີ ແລະເມືອງກໍສະຫງົບງຽບຫລັງຈາກ
ທີ່ພວກເຂົາໄດ້ປະຫານພະນາງ ອາທາລີຢາ ເສຍດ້ວຍດາບແລ້ວ

# ບົດທີ 24

## ເຢໂຮຢາດາຕັ້ງໂຢອາດເປັນກະສັດ[ຂ]

[1]ເມື່ອ ໂຢອາດ ໄດ້ເລີ່ມປົກຄອງນັ້ນ ພະອົງມີອາຍຸເຈັດປີ ແລະຊົງປົກຄອງໃນເມືອງ ເຢຣູຊາ-
ເລັມ ສີ່ສິບປີ ມານດາຂອງພະອົງຊົງພະນາມວ່າ ນາງຊີບີຢາ ແຫ່ງເມືອງ ເບເອ-ເຊບາ [2]ແລະ
ໂຢອາດ ຊົງກະທຳສິ່ງທີ່ຊອບໃນສາຍພຣະເນດຂອງ ພຣະຜູ້ເປັນເຈົ້າຕະຫລອດຊົ່ວອາຍຸຂອງປະ-
ໂລຫິດ ເຢໂຮຢາດາ [3]ເຢໂຮຢາດາຫາມະເຫສີໃຫ້ພະອົງສອງອົງ ແລະພະອົງກໍໃຫ້ກຳເນີດລູກ
ຊາຍ ແລະລູກສາວຫລາຍອົງ

## ໂຢອາດປົກຄອງເໜືອຢູດາ[ຄ]

[4]ຕໍ່ມາພາຍຫລັງ ໂຢອາດ ຊົງຕັ້ງພະໄທທີ່ຈະສ້ອມແປງພຣະວິຫານຂອງ ພຣະຜູ້ເປັນເຈົ້າ [5]ພະ
ອົງຊົງປະຊຸມປະໂລຫິດ ແລະຄົນເລວີ ໂດຍກ່າວກັບພວກເຂົາວ່າ "ຈົ່ງອອກໄປຕາມຫົວເມືອງ
ຢູດາ ແລະເກັບເງິນຈາກອິສຣາເອນທັງປວງ ເພື່ອສ້ອມແປງພຣະວິຫານຂອງ ພຣະເຈົ້າຂອງ
ເຈົ້າເປັນປີໆໄປ ແລະຈົ່ງຮີບເຮັດວຽກນັ້ນ" ແຕ່ຄົນເລວີບໍ່ເລັ່ງເຮັດວຽກ
[6]ແລ້ວກະສັດຈຶ່ງເອີ້ນ ເຢໂຮຢາດາຜູ້ເປັນຫົວໜ້າ ແລະກ່າວກັບເພິ່ນວ່າ "ເຫດໃດທ່ານບໍ່ຮຽກ-
ຮ້ອງໃຫ້ຄົນເລວີ ນຳເງິນເສຍສ່ວຍເຂົ້າມາຈາກຢູດາ ແລະ ເຢຣູຊາເລັມ ຊຶ່ງ ໂມເຊຜູ້ຮັບໃຊ້ຂອງ
ພຣະຜູ້ເປັນເຈົ້າ ກຳນົດໄວ້ ໃຫ້ຊຸມນຸມຊົນ ອິສຣາເອນ ນຳມາເພື່ອຫໍເຕັນພຣະໂອວາດ" [7]ເພາະ
ບັນດາລູກຊາຍຂອງພະນາງ ອາທາລີຢາ ຍິງຜູ້ຊົ່ວຮ້າຍຄົນນັ້ນໄດ້ປຸ້ນພຣະວິຫານຂອງ ພຣະເຈົ້າ
ແລະໄດ້ເອົາສິ່ງຂອງທີ່ມອບຖວາຍທັງໝົດຂອງພຣະວິຫານຂອງ ພຣະຜູ້ເປັນເຈົ້າ ມອບໃຫ້ແກ່
ພະບາອານ

## ພວກປະໂລຫິດທີ່ບໍ່ມີປະສິດທິພາບ ແລະບໍ່ເອົາໃຈໃສ່ງານຂອງພຣະເຈົ້າ[ກ]

[8]ກະສັດຈຶ່ງຊົງບັນຊາພວກເຂົາໃຫ້ເຮັດຫີບໜ່ວຍໜຶ່ງວາງໄວ້ນອກປະຕູພຣະວິຫານຂອງ ພຣະ-
ຜູ້ເປັນເຈົ້າ [9]ແລະມີຄຳປະກາດໄປທົ່ວຢູດາ ແລະ ເຢຣູຊາເລັມ ໃຫ້ເສຍສ່ວຍຕາມທີ່ ໂມເຊຜູ້ຮັບ
ໃຊ້ຂອງ ພຣະເຈົ້າ ກຳນົດແກ່ອິສຣາເອນ ໃນຖິ່ນແຫ້ງແລ້ງກັນດານ ເຂົ້າມາຖວາຍ ພຣະຜູ້ເປັນ-
ເຈົ້າ [10]ບັນດາເຈົ້ານາຍທັງໝົດ ແລະປະຊາຊົນທັງປວງກໍປິຕິຍິນດີ ແລະນຳຄ່າເສຍສ່ວຍຂອງ
ພວກເຂົາທັງຫລາຍມາປ່ອນລົງໃນຫີບຈົນຄົບ [11]ຕໍ່ມາເມື່ອຄົນເລວີນຳຫີບເຂົ້າມາໃຫ້ພະນັກງານ

---
[ກ]2 ປະຫວັດກະສັດ 12:48 [ຂ]2 ປະຫວັດກະສັດ 12:9-16

ຂອງກະສັດເມື່ອໃດ ແລະເມື່ອພວກເຂົາເຫັນວ່າມີເງິນຫລາຍ ເລຂາ ແລະເຈົ້າໜ້າທີ່ຂອງມະຫາ
ປະໂລຫິດຈະເຂົ້າມາຖອກຫີບອອກ ແລະນຳຫີບກັບໄປໄວ້ບ່ອນເກົ່າ ພວກເຂົາເຮັດຢ່າງນີ້ທຸກມື້
ແລະເກັບເງິນໄດ້ເປັນຈຳນວນຫລາຍ

12ກະສັດ ແລະ ເຢໂຮຢາດາກໍມອບໃຫ້ແກ່ບັນດາຜູ້ເບິ່ງແຍງກິດຈະການຂອງພຣະວິຫານຂອງ
ພຣະຜູ້ເປັນເຈົ້າ ແລະຈ້າງຊ່າງກໍ່ ຊ່າງໄມ້ໃຫ້ສ້ອມແປງພຣະວິຫານຂອງ ພຣະຜູ້ເປັນເຈົ້າ ທັງ
ຄົນງານຊ່າງ ເຫລັກ ແລະຊ່າງທອງເຫລືອງ ໃຫ້ສ້ອມແປງພຣະວິຫານຂອງ ພຣະຜູ້ເປັນເຈົ້າ
13ບັນດາຄົນທີ່ຮັບຈ້າງເຮັດວຽກຈຶ່ງໄດ້ເຮັດວຽກ ແລະງານສ້ອມແປງກໍດຳເນີນກ້າວໜ້າໃນມືຂອງ
ພວກເຂົາ ພວກເຂົາໄດ້ສ້ອມແປງພຣະວິຫານຂອງ ພຣະເຈົ້າ ຕາມຂະໜາດເດີມ ແລະເສີມໃຫ້
ແຂງແຮງຂຶ້ນ 14ເມື່ອພວກເຂົາໄດ້ເຮັດສຳເລັດແລ້ວ ເຂົາກໍນຳເງິນທີ່ເຫລືອຢູ່ມາຕໍ່ໜ້າພະພັກກະ-
ສັດ ແລະ ເຢໂຮຢາດາ ພວກເຂົາຈຶ່ງ ເອົາເງິນນັ້ນເຮັດເຄື່ອງໃຊ້ສຳລັບພຣະວິຫານ ແຫ່ງ ພຣະຜູ້-
ເປັນເຈົ້າ ຄືເຄື່ອງໃຊ້ສຳລັບການບົວລະບັດ ທັງສຳລັບການຖວາຍເຄື່ອງບູຊາ ແລະຖ້ວຍ ແລະ
ພາຊະນະຄຳ ແລະເງິນ ພວກເຂົາໄດ້ຖວາຍເຄື່ອງເຜົາບູຊາໃນພຣະວິຫານຂອງ ພຣະຜູ້ເປັນເຈົ້າ
ຕະຫລອດຊົ່ວອາຍຸຂອງ ເຢໂຮຢາດາ

## ການສ້ອມແປງພຣະວິຫານ[ຂ]

15ເມື່ອ ເຢໂຮຢາດາ ເຖົ້າແກ່ຫລາຍແລ້ວ ກໍສິ້ນຊີວິດ ເມື່ອສິ້ນຊີວິດນັ້ນ ເພິ່ນມີອາຍຸໜຶ່ງຮ້ອຍ
ສາມສິບປີ 16ພວກເຂົາກໍຝັງສົບເພິ່ນໄວ້ໃນນະຄອນຂອງ ດາວິດ ທ່າມກາງບັນດາກະສັດ ເພາະ
ເພິ່ນໄດ້ກະທຳການດີໃນ ອິສຣາເອນ ຕໍ່ ພຣະເຈົ້າ ແລະພຣະວິຫານຂອງພຣະອົງ

17ຫລັງຈາກທີ່ ເຢໂຮຢາດາ ສິ້ນຊີວິດແລ້ວບັນດາເຈົ້ານາຍ ແຫ່ງ ຢູດາ ໄດ້ເຂົ້າມາຖວາຍບັງຄົມຕໍ່
ກະສັດ ແລ້ວກະສັດຊົງຟັງຄຳທູນຂອງພວກເຂົາ 18ພວກເຂົາໄດ້ປະຖິ້ມພຣະວິຫານຂອງ ພຣະ-
ຜູ້ເປັນເຈົ້າ ພຣະເຈົ້າ ແຫ່ງ ບັນພະບູລຸດ ຂອງ ພວກ ເຂົາ ແລະ ບົວລະບັດບັນດາ ເສົາຮູບ ເຄົາລົບ
ແລະຮູບເຄົາລົບ ພຣະພິໂລດໄດ້ລົງມາເໜືອຢູດາ ແລະ ເຢຣູຊາເລັມ ເພາະບາບຂອງພວກເຂົາ
19ແຕ່ ພຣະອົງ ຍັງ ຊົງ ໃຊ້ ຜູ້ ທຳນວາຍ ມາ ທ່າມກາງ ພວກ ເຂົາ ເພື່ອ ຈະ ນຳ ພວກ ເຂົາ ໃຫ້ ກັບ ມາ ຫາ
ພຣະຜູ້ເປັນເຈົ້າ ຄົນເຫລົ່ານີ້ເປັນພະຍານຕໍ່ສູ້ພວກເຂົາ ແຕ່ພວກເຂົາກໍບໍ່ຍອມຫງ່ຽງຫູຟັງ

## ເຢໂຮຢາດາເສຍຊີວິດ

20ແລ້ວ ພຣະວິນຍານ ຂອງ ພຣະເຈົ້າ ໄດ້ສວມທັບ ເຊຄາຣີຢາ ລູກຊາຍ ເຢໂຮຢາດາ ເພິ່ນຢືນຢູ່
ເໜືອປະຊາຊົນແລະກ່າວແກ່ພວກເຂົາວ່າ "ພຣະເຈົ້າກ່າວດັ່ງນີ້ວ່າ 'ເປັນຫຍັງທ່ານທັງຫລາຍຈຶ່ງ
ລະເມີດພຣະບັນຍັດຂອງ ພຣະຜູ້ເປັນເຈົ້າ ອັນເປັນເຫດໃຫ້ທ່ານຈະເລີນຂຶ້ນບໍ່ໄດ້' ເພາະທ່ານທັງ-
ຫລາຍໄດ້ປະຖິ້ມ ພຣະຜູ້ເປັນເຈົ້າ ພຣະອົງຈຶ່ງປະຖິ້ມທ່ານ" 21ພວກເຂົາທັງຫລາຍຄິດຮ້າຍຕໍ່ ເຊ-
ຄາຣີຢາ ແລະໂດຍຄຳບັນຊາຂອງກະສັດ ພວກເຂົາຈຶ່ງ ແກວ່ງຫີນໃສ່ເພິ່ນໃນເດີ່ນພຣະວິຫານ
ຂອງ ພຣະຜູ້ເປັນເຈົ້າ 22ດັ່ງນີ້ແຫລະ ກະສັດ ໂຢອາດ ຈຶ່ງບໍ່ໄດ້ຊົງລະນຶກເຖິງຄວາມກະລຸນາທີ່
ເຢໂຮຢາດາ ພໍ່ຂອງ ເຊຄາຣີຢາ ໄດ້ສະແດງຕໍ່ພະອົງ ແຕ່ໄດ້ຊົງປະຫານລູກຊາຍຂອງ ເພິ່ນ ເສຍ
ແລະ ເມື່ອພວກເຂົາກຳລັງ ຈະຕາຍ ພວກເຂົາ ເວົ້າວ່າ "ຂໍ ພຣະຜູ້ເປັນເຈົ້າ ຊົງທອດພຣະເນດ
ແລະແກ້ແຄ້ນແທນ"

[23]ຕໍ່ມາເມື່ອຮອດທ້າຍປີ ກອງທັບຂອງຄົນຊີເຣຍກໍມາຕໍ່ສູ້ກັບໂຢອາດ ພວກເຂົາມາຮອດຢູ-
ດາ ແລະເຢຣູຊາເລັມ ແລ້ວໄດ້ທຳລາຍບັນດາເຈົ້ານາຍຂອງປະຊາຊົນຈາກໝູ່ປະຊາຊົນ ແລະ
ສິ່ງເຄື່ອງທີ່ຍຶດໄດ້ທັງໝົດໄປໃຫ້ກະສັດແຫ່ງດາມາເຊ [24]ເຖິງວ່າກອງທັບຄົນຊີເຣຍມາແຕ່ໜ້ອຍ
ຄົນ ພຣະຜູ້ເປັນເຈົ້າຊົງມອບກອງທັບໃຫຍ່ໄວ້ໃນມືຂອງພວກເຂົາ ເພາະຢູດາໄດ້ປະຖິ້ມພຣະ-
ຜູ້ເປັນເຈົ້າພຣະເຈົ້າແຫ່ງບັນພະບູລຸດຂອງຕົນ ດັ່ງນີ້ແຫລະ ຄົນຊີເຣຍຈຶ່ງໄດ້ລົງໂທດໂຢອາດ

## ປະຊາຊົນເອົາຫີນແກວ່ງໃສ່ເຊຄາຣີຢາ

[25]ເມື່ອພວກເຂົາຈາກພະອົງໄປ ຂ້າລາຊະການຂອງພະອົງ ກໍຄິດຮ້າຍຕໍ່ພະອົງ ເພາະເລືອດ
ຂອງລູກຊາຍເຢໂຮຍາດາປະໂລຫິດ ແລະໄດ້ປະຫານພະອົງເສຍທີ່ເທິງຕຽງນອນ ພະອົງກໍສິ້ນ
ພະຊົນ ພວກເຂົາຝັງພະສົບໄວ້ໃນນະຄອນດາວິດ ແຕ່ບໍ່ໄດ້ຝັງພະສົບໄວ້ໃນຊຸມຝັງສົບຂອງ
ບັນດາກະສັດ [26]ຄົນເຫລົ່ານັ້ນທີ່ຄິດຮ້າຍຕໍ່ພະອົງ ຄືຊາບາດລູກຊາຍນາງຊີເມອາດຄົນອຳໂມນ
ແລະເຢໂຮຊາບັດລູກຊາຍນາງຊິມຣິດຄົນໂມອາບ

[27]ເລື່ອງລາວແຫ່ງລູກຊາຍຂອງພະອົງ ແລະພາລະອັນໜັກຫລວງທີ່ຕົກຢູ່ແກ່ພະອົງ ແລະ
ການສ້ອມແປງພຣະວິຫານຂອງພຣະເຈົ້າ ກໍມີບັນທຶກໄວ້ໃນໜັງສືເລື່ອງລາວຂອງກະສັດ ແລະ
ອາມາຊີຢາລູກຊາຍຂອງພະອົງຂຶ້ນປົກຄອງແທນພະອົງ

# ບົດທີ 25

## ໂຢອາດສິ້ນພະຊົນ[ກ]

[1]ເມື່ອອາມາຊີຢາເລີ່ມປົກຄອງນັ້ນ ພະອົງມີອາຍຸຊາວຫ້າປີ ແລະຊົງປົກຄອງໃນເຢຣູຊາເລັມ
ຊາວເກົ້າປີ ພະມານດາຂອງພະອົງຊົງພະນາມວ່າ ເຢໂຮອັດດັນ ຊາວເຢຣູຊາເລັມ [2]ແລະພະ
ອົງຊົງກະທຳສິ່ງທີ່ພໍພຣະໄທໃນສາຍພຣະເນດຂອງພຣະຜູ້ເປັນເຈົ້າ ແຕ່ບໍ່ແມ່ນດ້ວຍພະໄທທີ່-
ແທ້ຈິງ

[3]ແລະຢູ່ມາພໍລາຊະອານາຈັກຢູ່ໃນພະຫັດຂອງພະອົງຢ່າງໝັ້ນຄົງແລ້ວ ພະອົງຊົງປະຫານຊີ-
ວິດຂ້າລາຊະການຂອງພະອົງ ຜູ້ທີ່ຂ້າພໍ່ຂອງພະອົງ [4]ແຕ່ພະອົງບໍ່ໄດ້ຊົງປະຫານຊີວິດລູກຫລານ
ຂອງພວກເຂົາ ແຕ່ໄດ້ຊົງກະທຳຕາມທີ່ມີບັນທຶກໄວ້ໃນໜັງສືພຣະບັນຍັດຂອງໂມເຊ ທີ່ພຣະຜູ້-
ເປັນເຈົ້າຊົງບັນຊາໄວ້ນັ້ນວ່າ “ຢ່າໃຫ້ພໍ່ຕ້ອງຮັບໂທດເຖິງຕາຍແທນລູກຂອງຕົນ ຫລືໃຫ້ລູກ
ຕ້ອງຮັບໂທດເຖິງຕາຍແທນພໍ່ຂອງຕົນ ໃຫ້ທຸກຄົນຮັບໂທດເຖິງຕາຍເນື່ອງດ້ວຍບາບຂອງຄົນ
ນັ້ນເອງ”

## ອາມາຊີຢາປົກຄອງຢູ່ເໜືອຢູດາ

[5]ແລ້ວອາມາຊີຢາໄດ້ປະຊຸມພວກຢູດາ ແລະໃຫ້ພວກເຂົາຢູ່ພາຍໃຕ້ຜູ້ບັງຄັບກອງພັນ ແລະ
ຜູ້ບັງຄັບກອງຮ້ອຍ ຕາມເຮືອນບັນພະບູລຸດຂອງຕົນ ຄືຢູດາ ແລະເບັນຢາມິນທັງໝົດ ພະອົງ
ໄດ້ຊົງນັບຄົນທີ່ມີອາຍຸຊາວປີຂຶ້ນໄປ ແລະຊົງເຫັນວ່າມີຊາຍໜຸ່ມສາມແສນຄົນ ສາມາດເຂົ້າເຮັດ
ສົງຄາມ ສາມາດຖືຫອກ ແລະໂລ່ [6]ນອກຈາກນັ້ນ ພະອົງຊົງຈ້າງທະຫານທີ່ເກັ່ງກ້າຈາກອິ-

[ກ]2 ປະຫວັດກະສັດ 12:19-21

ສຣາເອນ ໜຶ່ງແສນຄົນເປັນເງິນໜຶ່ງຮ້ອຍຕະລັນຕົນ
7ແຕ່ຄົນຂອງ ພຣະເຈົ້າ ຄົນໜຶ່ງມາເຝົ້າພະອົງທູນວ່າ "ຂ້າແດ່ກະສັດ ຂໍຢ່າໃຫ້ກອງທັບ ອິ-
ສຣາເອນ ໄປກັບພະອົງ ເພາະ ພຣະຜູ້ເປັນເຈົ້າ ບໍ່ໄດ້ຊົງສະຖິດຢູ່ກັບ ອິສຣາເອນ ຄືກັບຄົນ ເອ-
ຟຣາຢິມ ເຫລົ່ານີ້ທັງໝົດ 8ແຕ່ຖ້າພະອົງຄາດໝາຍວ່າໂດຍວິທີນີ້ ພະອົງຈະເຂັ້ມແຂງພໍທີ່ຈະເຂົ້າ
ສົງຄາມ ພຣະເຈົ້າ ຈະຊົງ ແກວ່ງພະອົງລົງຕໍ່ໜ້າສັດຕູ ເພາະວ່າ ພຣະເຈົ້າ ຊົງລິດທີ່ຈະຊ່ວຍໄວ້
ຫລືຖິ້ມໄປໄດ້" 9ແລະ ອາມາຊີຢາ ກ່າວກັບຄົນຂອງ ພຣະເຈົ້າ ວ່າ "ແຕ່ເຮົາຈະເຮັດປະການໃດໃນ
ເລື່ອງ ເງິນໜຶ່ງຮ້ອຍຕະລັນຕົນຊຶ່ງ ເຮົາໄດ້ໃຫ້ແກ່ກອງທັບ ອິສຣາເອນ ໄປແລ້ວນັ້ນ" ແລ້ວຄົນຂອງ
ພຣະເຈົ້າ ທູນຕອບວ່າ "ພຣະຜູ້ເປັນເຈົ້າ ຊົງສາມາດທີ່ຈະປະທານ ແກ່ພະອົງຫລາຍກວ່ານີ້ອີກ
ຫລາຍເທົ່າ" 10ແລະ ອາມາຊີຢາ ກໍຊົງປົດປ່ອຍກອງທັບຊຶ່ງມາຫາພະອົງຈາກ ເອຟຣາຢິມ ໃຫ້ກັບ
ໄປເຮືອນອີກ ພວກເຂົາຈຶ່ງຮ້າຍ ຢູດາ ຫລາຍ ແລະໄດ້ກັບເຮືອນດ້ວຍຄວາມໂກດຮ້າຍ ຢ່າງຮຸນ
ແຮງ 11ແຕ່ ອາມາຊີຢາ ຊົງກ້າແຂງຂຶ້ນ ແລະຊົງນຳທະຫານຂອງພະອົງອອກໄປຍັງພູເຂົາເກືອ
ແລະ ໂຈມຕີຄົນ ເສອີ ໜຶ່ງໝື່ນຄົນ 12ຄົນ ຢູດາ ຈັບ ເປັນ ໄດ້ໜຶ່ງໝື່ນຄົນ ແລະພາພວກເຂົາໄປທີ່
ຈອມຜາ ແລະຖິ້ມລົງ ເຫວນັ້ນ ພວກເຂົາກໍຕົກລົງມຸ່ນເປັນຕ່ອນໆ 13ແຕ່ຄົນຂອງກອງທັບຊຶ່ງ
ອາມາຊີຢາ ຊົງປົດໃຫ້ກັບໄປ ແລະບໍ່ໃຫ້ໄປຮົບດ້ວຍນັ້ນ ພວກເຂົາລ້າຖອຍເຂົ້າໂຈມຕີຫົວເມືອງ
ຂອງ ຢູດາ ຕັ້ງແຕ່ ຊາມາເຣຍ ເຖິງ ເບັດ-ໂຮໂຣນ ແລະຂ້າປະຊາຊົນສາມພັນຄົນ ແລະຍຶດສິ່ງ
ຂອງໄປເປັນຈຳນວນຫລາຍ
14ແລະຢູ່ມາເມື່ອ ອາມາຊີຢາ ສະເດັດກັບຈາກການຂ້າຟັນຄົນ ເອໂດມ ພະອົງຊົງນຳຮູບເຄົາ-
ລົບຂອງຊາວ ເສອີ ມາຕັ້ງໄວ້ເປັນພະຂອງພະອົງ ແລະກາບນະມັດສະການພະເຫລົ່ານັ້ນ ຊົງເຜົາ
ເຄື່ອງຫອມຖວາຍ 15ເພາະສະນັ້ນ ພຣະຜູ້ເປັນເຈົ້າ ຊົງຮ້າຍຕໍ່ ອາມາຊີຢາ ແລະຊົງໃຊ້ຜູ້ທຳ-
ນວາຍຄົນໜຶ່ງໄປຫາ ທູນພະອົງວ່າ "ເປັນຫຍັງເຈົ້າຈຶ່ງສະແຫວງຫາພະຂອງຊົນຊາດໜຶ່ງ ຊຶ່ງບໍ່
ສາມາດຊ່ວຍຊົນຊາດຂອງຕົນເອງໃຫ້ພົ້ນຈາກມືຂອງເຈົ້າໄດ້" 16ຢູ່ມາຂະນະທີ່ລາວກຳລັງທູນຢູ່
ກະສັດກ່າວກັບລາວວ່າ "ເຮົາໄດ້ແຕ່ງຕັ້ງເຈົ້າໃຫ້ເປັນທີ່ປຶກສາຂອງກະສັດຫລື ຢຸດ! ເປັນຫຍັງ
ເຈົ້າຈະຕ້ອງຕາຍ" ຜູ້ທຳນວາຍນັ້ນຈຶ່ງຢຸດ ແຕ່ທູນວ່າ "ຂ້າພະອົງຮູ້ວ່າ ພຣະເຈົ້າ ຊົງຕັ້ງພຣະໄທ
ຈະທຳລາຍພະອົງ ເພາະພະອົງຊົງກະທຳເຊັ່ນນີ້ ແລະບໍ່ໄດ້ຊົງຟັງຄຳປຶກສາຂອງຂ້າພະອົງ"

## ຢູດາບຸກລຸກເອໂດມ

17ແລ້ວ ອາມາຊີຢາ ກະສັດ ແຫ່ງ ຢູດາ ໄດ້ຊົງຮັບຄຳປຶກສາ ແລະຊົງໃຊ້ໃຫ້ໄປເຝົ້າ ໂຢອາດ ລູກ
ຊາຍຂອງ ເຢໂຮອາຮາດ ລູກຊາຍຂອງ ເຢຮູ ກະສັດຂອງ ອິສຣາເອນ ທູນວ່າ "ມາແມ ໃຫ້ເຮົາ
ທັງສອງມາປະເຊີນໜ້າກັນ" 18ແລະ ໂຢອາດ ກະສັດ ແຫ່ງ ອິສຣາເອນ ຊົງ ໃຊ້ໄປຍັງ ອາມາຊີຢາ
ກະສັດ ແຫ່ງ ຢູດາ ວ່າ "ຕົ້ນຜັກໜາມ ເທິງ ເລບານອນ ສົ່ງຂ່າວ ໄປຫາຕົ້ນສົນ ເທິງ ເລບານອນ ວ່າ
'ຈົ່ງຍົກລູກສາວຂອງ ເຈົ້າ ໃຫ້ ເປັນ ເມຍລູກຊາຍຂອງ ເຮົາ' ແລະສັດປ່າ ໂຕໜຶ່ງ ແຫ່ງ ເລບານອນ
ຜ່ານມາ ຢຽບຕົ້ນຜັກໜາມລົງເສຍ 19ທ່ານວ່າ 'ເບິ່ງແມ ຂ້າພະເຈົ້າໄດ້ໂຈມຕີ ເອໂດມ' ແລະ
ຈິດໃຈຂອງທ່ານກໍຈອງຫອງຂຶ້ນໃນຄວາມໂອ້ອວດ ແຕ່ຈົ່ງຢູ່ກັບເຮືອນເຖີດ ເພາະເຫດໃດທ່ານ
ຈຶ່ງເລົ້າໃຈຕົນເອງໃຫ້ຕໍ່ສູ້ ແລະຮັບອັນຕະລາຍ ອັນຈະໃຫ້ທ່ານລົ້ມລົງ ທັງທ່ານ ແລະຢູດາ"

[20]ແຕ່ ອາມາຊີຢາ ບໍ່ຊົງຟັງ ເພາະ ເປັນມາຈາກ ພຣະເຈົ້າ ເພື່ອວ່າພະອົງຈະຊົງມອບພວກເຂົາ
ທັງຫລາຍໄວ້ໃນມືຂອງສັດຕູ ເພາະພວກເຂົາໄດ້ຊອກຫາພະ ແຫ່ງ ເອໂດມ [21]ໂຢອາດ ກະສັດ
ແຫ່ງ ອິສຣາເອນ ຈຶ່ງສະເດັດຂຶ້ນໄປ ພະອົງ ແລະ ອາມາຊີຢາ ກະສັດ ແຫ່ງ ຢູດາ ໄດ້ປະເຊີນໜ້າ
ກັນທີ່ ເບັດ-ເຊເມັດ ຊຶ່ງເປັນຂອງ ຢູດາ [22]ຢູດາ ກໍພ່າຍແພ້ອິສຣາເອນ ແລະທຸກຄົນກໍໜີກັບໄປ
ເຕັນຂອງຕົນ [23]ໂຢອາດ ກະສັດ ແຫ່ງ ອິສຣາເອນ ຊົງຈັບ ອາມາຊີຢາ ກະສັດ ແຫ່ງ ຢູດາ ລູກຊາຍ
ຂອງ ໂຢອາດ ລູກຊາຍຂອງ ເຢໂຮອາຮາດ ທີ່ ເບັດ-ເຊເມັດ ແລະນຳພະອົງມາຍັງ ເຢຣູຊາເລັມ
ຊົງທຳລາຍກຳແພງ ເຢຣູຊາເລັມ ລົງສີ່ຮ້ອຍສອກ ຕັ້ງແຕ່ປະຕູ ເອຟຣາຢິມ ເຖິງປະຕູແຈ [24]ແລະ
ພະອົງຊົງຍຶດຄຳ ແລະເງິນທັງໝົດ ທັງເຄື່ອງໃຊ້ທັງໝົດຊຶ່ງພົບໃນພຣະວິຫານຂອງ ພຣະເຈົ້າ ໃນ
ຄວາມຮັກສາຂອງ ໂອເບັດ ເອໂດມ ທັງຄັງຊັບຂອງສຳນັກພະລາຊະວັງ ພ້ອມກັບຄົນປະກັນ
ດ້ວຍ ແລະພະອົງສະເດັດກັບໄປຍັງ ຊາມາເຣຍ

[25]ອາມາຊີຢາ ລູກຊາຍຂອງ ໂຢອາດ ກະສັດ ແຫ່ງ ຢູດາ ຊົງພະຊົນຢູ່ສິບຫ້າປີ ຫລັງຈາກການ
ສະຫວັນນະຄົດຂອງ ໂຢອາດ ລູກຊາຍຂອງ ເຢໂຮອາຮາດ ກະສັດ ແຫ່ງ ອິສຣາເອນ

### ສົງຄາມລະຫວ່າງຢູດາກັບອິສຣາເອນ[ກ]

[26]ສ່ວນພະລາຊະກິດນອກນັ້ນຂອງ ອາມາຊີຢາ ຕັ້ງແຕ່ຕົ້ນຈົນຈົບ ກໍໄດ້ບັນທຶກໄວ້ໃນໜັງສື
ຂອງກະສັດ ແຫ່ງ ຢູດາ ແລະ ອິສຣາເອນ [27]ນັບແຕ່ເວລາທີ່ ອາມາຊີຢາ ຊົງຫັນໄປຈາກການຕິດ-
ຕາມ ພຣະຜູ້ເປັນເຈົ້າ ພວກເຂົາທັງຫລາຍກໍຄິດກະບົດ ຕໍ່ພະອົງໃນ ເຢຣູຊາເລັມ ແລະພະອົງ
ຊົງໜີໄປທີ່ ລາກິດ ແຕ່ພວກເຂົາໄປຕາມພະອົງທີ່ ລາກິດ ແລະປະຫານພະອົງ ເສຍບ່ອນນັ້ນ
[28]ພວກເຂົານຳພະສົບໃສ່ຫລັງມ້າກັບມາ ແລະຝັງໄວ້ກັບບັນພະບູລຸດຂອງພະອົງໃນ ເມືອງ ແຫ່ງ
ຢູດາ

## ບົດທີ 26

### ການສິ້ນພະຊົນຂອງອາມາຊີຢາ[ຂ]

[1]ປະຊາຊົນທັງໝົດ ແຫ່ງ ຢູດາ ຈຶ່ງຕັ້ງ ອຸດຊີຢາ ຜູ້ຊຶ່ງມີອາຍຸສິບຫົກປີ ໃຫ້ເປັນກະສັດແທນ ອາ-
ມາຊີຢາ ບິດາຂອງພະອົງ [2]ພະອົງຊົງສ້າງ ເມືອງ ເອລັດ ແລະ ໃຫ້ກັບຄືນ ແກ່ ຢູດາ ຫລັງຈາກທີ່
ກະສັດຊົງລ່ວງລັບໄປຢູ່ກັບບັນພະບູລຸດຂອງພະອົງ

[3]ເມື່ອ ອຸດຊີຢາ ຊົງ ເລີ່ມປົກຄອງນັ້ນ ພະອົງມີອາຍຸສິບຫົກປີ ແລະຊົງປົກຄອງໃນ ເມືອງ ເຢຣູ-
ຊາເລັມ ຫ້າສິບສອງປີ ພະມານດາຂອງພະອົງຊົງພະນາມວ່າ ເຢໂກລີຢາ ຊາວ ເຢຣູຊາເລັມ
[4]ແລະພະອົງຊົງກະທຳສິ່ງທີ່ພໍພຣະໄທໃນສາຍພຣະເນດຂອງ ພຣະຜູ້ເປັນເຈົ້າ ຕາມທີ່ ອາມາຊີ-
ຢາ ພໍ່ຂອງພະອົງ ໄດ້ຊົງກະທຳທຸກປະການ [5]ພະອົງຊົງສະແຫວງຫາ ພຣະເຈົ້າ ໃນສະໄໝຂອງ
ເຊຄາຣີຢາ ຜູ້ເຂົ້າໃຈໃນນິມິດຕ່າງໆຈາກ ພຣະເຈົ້າ ແລະຕາບໃດທີ່ພະອົງສະແຫວງຫາ ພຣະຜູ້-
ເປັນເຈົ້າ ພຣະເຈົ້າກໍຊົງກະທຳໃຫ້ພະອົງຈະເລີນ

---

[ກ]2 ປະຫວັດກະສັດ 14:8-14

[ຂ]2 ປະຫວັດກະສັດ 14:17-20 [ຂ]2 ປະຫວັດກະສັດ 14:21

## ອຸດຊີຢາເປັນກະສັດແທນອາມາຊີຢາ[ຂ]

6ພະອົງສະເດັດອອກໄປເຮັດສົງຄາມຕໍ່ສູ້ກັບຄົນ ຟີລິດສະຕິນ ແລະພັງກຳແພງ ເມືອງ ກັດ,
ກຳແພງເມືອງຢັບເນ, ກຳແພງເມືອງ ອາຊະໂດດ, ພະອົງຊົງສ້າງຫົວເມືອງໃນເຂດແດນ ອາຊະ-
ໂດດ ແລະບ່ອນອື່ນໆອີກທ່າມກາງຄົນ ຟີລິດສະຕິນ 7ພຣະເຈົ້າ ຊົງຊ່ວຍພະອົງໃນການຕໍ່ສູ້ຄົນ
ຟີລິດສະຕິນ ແລະຕໍ່ສູ້ຄົນ ອາຫລັບ ທີ່ອາໄສຢູ່ໃນ ກູເຣ-ບາອານ ແລະຕໍ່ສູ້ກັບຄົນ ເມອູນິມ 8ຊົນ
ອຳໂມນ ໄດ້ຖວາຍບັນນາການ ແກ່ ອຸດຊີຢາ ແລະພະນາມຂອງພະອົງກໍແຜ່ອອກໄປເຖິງເຂດ
ແດນ ເອຢິບ ເພາະພະອົງຊົງເຂັ້ມແຂງຂຶ້ນຫລາຍ

9ຫລາຍກວ່ານັ້ນອີກ ອຸດຊີຢາ ຊົງສ້າງປ້ອມໃນ ເຢຣູຊາເລັມ ທີ່ປະຕູແຈ ທີ່ປະຕູພູເຂົາ ແລະ
ບ່ອນກຳແພງໂຄ້ງຢ່າງແຂງແຮງ 10ພະອົງຊົງສ້າງປ້ອມໃນຖິ່ນແຫ້ງແລ້ງກັນດານ ຊົງຂຸດນໍ້າ-
ສ້າງຫລາຍແຫ່ງ ເພາະພະອົງຊົງມີຝູງສັດໃຫຍ່ທັງໃນພູເຂົາ ແລະໃນທົ່ງພຽງ ຊົງມີຊາວນາ
ແລະຄົນຕັດແຕ່ງຕົ້ນອະງຸ່ນໃນໂນນພູໃນ ກາເມນ ເພາະພະອົງຊົງຮັກການກະເສດຫລາຍ

11ຫລາຍກວ່ານັ້ນອີກ ອຸດຊີຢາ ຊົງມີກອງທະຫານທີ່ອອກໄປເຮັດເສິກເປັນກອງໆຕາມຈຳ-
ນວນທີ່ ເຢອີເອນ ເລຂາໄດ້ຮວບຮວມໄວ້ນຳກັນ ກັບ ມາອາເສຢາ ເຈົ້າໜ້າທີ່ພາຍໃຕ້ການຄວບ
ຄຸມຂອງ ຮານານີຢາ ຜູ້ບັງຄັບກອງທະຫານຄົນໜຶ່ງຂອງກະສັດ 12ຈຳນວນຫົວໜ້າຂອງບັນພະ-
ບູລຸດທັງໝົດແຫ່ງພວກທະຫານກ້າຄື ສອງພັນຫົກຮ້ອຍຄົນ 13ໃຕ້ການບັງຄັບບັນຊາຂອງຄົນ
ເຫລົ່ານີ້ ມີກອງທັບທະຫານສາມແສນເຈັດພັນຫ້າຮ້ອຍຄົນ ຜູ້ເຮັດສົງຄາມໄດ້ດ້ວຍກຳລັງຫລາຍ
ເພື່ອຊ່ວຍກະສັດໃຫ້ຕໍ່ສູ້ກັບສັດຕູ 14ອຸດຊີຢາ ຊົງຕຽມໂລ່ ຫອກ ໝວກເຫລັກ ເສື້ອເກາະ ທະນູ
ແລະກ້ອນຫີນສຳລັບສະຫລິງໄວ້ໃຫ້ກອງທັບ 15ໃນ ເຢຣູຊາເລັມ ພະອົງຊົງເຮັດເຄື່ອງກົນໄກ
ໂດຍຄົນຊ່າງປະດິດເຮັດຂຶ້ນໄວ້ເທິງປ້ອມ ແລະຕາມແຈ ເພື່ອຍິງລູກທະນູ ແລະໂຍນກ້ອນຫີນ
ໃຫຍ່ໆ ແລະພະນາມຂອງພະອົງກໍຊ່າລືໄປໄກ ເພາະພະອົງຊົງຮັບຄວາມຊ່ວຍເຫລືອຢ່າງມະ-
ຫັດສະຈັນຈົນພະອົງເຂັ້ມແຂງ

## ອຸດຊີຢາຮັບພຣະພອນທັງດ້ານສົງຄາມ ແລະພະລາຊະກິດ

16ແຕ່ເມື່ອພະອົງຊົງແຂງແຮງແລ້ວ ພະອົງກໍມີພະໄທຈອງຫອງຂຶ້ນ ຈຶ່ງຊົງກະທຳຄວາມເສຍ
ຫາຍ ເພາະພະອົງລະເມີດຕໍ່ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງພະອົງ ໂດຍເຂົ້າໄປໃນພຣະວິຫານ
ຂອງ ພຣະຜູ້ເປັນເຈົ້າ ເພື່ອເຜົາເຄື່ອງຫອມເທິງແທ່ນບູຊາ 17ແຕ່ ອາຊາຣີຢາ ປະໂລຫິດໄດ້ເຂົ້າໄປ
ຕິດຕາມພະອົງພ້ອມກັບປະໂລຫິດຂອງ ພຣະຜູ້ເປັນເຈົ້າ ແປດສິບຄົນຜູ້ຊື່ງເກັ່ງກ້າ 18ພວກເຂົາ
ທັງຫລາຍໄດ້ຂັດຂວາງກະສັດ ອຸດຊີຢາ ແລະທູນພະອົງວ່າ “ຂ້າແດ່ ອຸດຊີຢາ ບໍ່ແມ່ນໜ້າທີ່ຂອງ
ພະອົງທີ່ຈະເຜົາເຄື່ອງຫອມຖວາຍແດ່ ພຣະຜູ້ເປັນເຈົ້າ ແຕ່ເປັນໜ້າທີ່ຂອງປະໂລຫິດລູກຫລານ
ຂອງ ອາໂຣນ ຜູ້ຊຶ່ງຊຳລະໄວ້ໃຫ້ບໍລິສຸດ ເພື່ອເຜົາເຄື່ອງຫອມ ຂໍເຊີນພະອົງສະເດັດອອກໄປ
ຈາກສະຖານທີ່ບໍລິສຸດນີ້ ເພາະພະອົງໄດ້ຊົງລ່ວງເກີນ ແລະຈະບໍ່ໄດ້ຮັບກຽດອັນໃດຈາກ ພຣະ-
ຜູ້ເປັນເຈົ້າ ເລີຍ” 19ແລ້ວ ອຸດຊີຢາ ຊົງຮ້າຍ ພະອົງມີກະຖາງໄຟຢູ່ໃນພຣະຫັດຈະຊົງເຜົາເຄື່ອງ
ຫອມ ເມື່ອພະອົງຊົງຮ້າຍຕໍ່ພວກປະໂລຫິດ ພະຍາດຂີ້ທູດກໍເກີດຂຶ້ນມາທີ່ໜ້າຜາກຂອງພະອົງ
ຕໍ່ໜ້າປະໂລຫິດໃນ ພຣະວິຫານ ຂອງ ພຣະຜູ້ເປັນເຈົ້າ ຂ້າງ ແທ່ນ ເຜົາ ເຄື່ອງຫອມ 20ອາຊາຣີຢາ

ປະໂລຫິດໃຫຍ່ ແລະບັນດາປະໂລຫິດທັງປວງເບິ່ງພະອົງ ແລະເບິ່ງແມ ພະອົງຊົງເປັນພະຍາດ
ຂີ້ທູດທີ່ໜ້າຜາກ ພວກເຂົາທັງຫລາຍຈຶ່ງຊຸກພະອົງອອກໄປຈາກບ່ອນນັ້ນ ແລະພະອົງເອງກໍຊົງ
ຮີບສະເດັດອອກໄປ ເພາະວ່າພຣະຜູ້ເປັນເຈົ້າຊົງລົງໂທດພະອົງແລ້ວ [21]ກະສັດອຸດຊີຢາຊົງ
ເປັນພະຍາດຂີ້ທູດຈົນມື້ສິ້ນພະຊົນ ແລະເພາະເປັນພະຍາດຂີ້ທູດຈຶ່ງຊົງປະທັບໃນວັງຕ່າງຫາກ
ເພາະພະອົງຊົງຖືກຕັດອອກຈາກພຣະວິຫານຂອງພຣະຜູ້ເປັນເຈົ້າ ແລະໂຢທາມລູກຊາຍຂອງ
ພະອົງເປັນຜູ້ເບິ່ງແຍງລາຊະສຳນັກປົກຄອງປະຊາຊົນແຫ່ງແຜ່ນດິນ

## ອຸດຊີຢາຊົງເຮັດໜ້າທີ່ຂອງປະໂລຫິດ ແລ້ວຮັບໂທດ

[22]ສ່ວນພະລາຊະກິດນອກນັ້ນຂອງອຸດຊີຢາ ຕັ້ງແຕ່ຕົ້ນຈົນຈົບ ເອຊາຢາຜູ້ທຳນວາຍ ລູກ
ຊາຍອາໂມດ ໄດ້ບັນທຶກໄວ້ [23]ແລະອຸດຊີຢາກໍຊົງລ່ວງລັບໄປຢູ່ກັບບັນພະບູລຸດຂອງພະອົງ
ພວກເຂົາກໍຝັງພະສົບໄວ້ກັບບັນພະບູລຸດຂອງພະອົງໃນນາບ່ອນຝັງສົບອັນເປັນຂອງກະສັດ
ໂດຍກ່າວວ່າ "ພະອົງຊົງເປັນພະຍາດຂີ້ທູດ" ແລະໂຢທາມລູກຊາຍຂອງພະອົງກໍຂຶ້ນປົກຄອງ
ແທນ

# ບົດທີ 27

## ການສິ້ນພະຊົນຂອງອຸດຊີຢາ ໂຢທາມປົກຄອງແທນພະອົງ[ກ]

[1]ເມື່ອໂຢທາມຊົງເລີ່ມປົກຄອງນັ້ນ ພະອົງມີອາຍຸຊາວຫ້າປີ ແລະຊົງປົກຄອງໃນເຢຣູຊາເລັມ
ສິບຫົກປີ ພະມານດາຂອງພະອົງມີພະນາມວ່າ ເຢຣຸຊາລູກສາວຂອງຊາໂດກ [2]ແລະພະອົງຊົງ
ກະທຳສິ່ງທີ່ພໍພຣະໄທໃນສາຍພຣະເນດຂອງພຣະຜູ້ເປັນເຈົ້າ ຕາມທີ່ອຸດຊີຢາພໍ່ຂອງພະອົງໄດ້
ຊົງກະທຳທຸກປະການ ເວັ້ນແຕ່ພະອົງບໍ່ໄດ້ເຂົ້າໄປໃນພຣະວິຫານຂອງພຣະຜູ້ເປັນເຈົ້າ ແຕ່ປະ-
ຊາຊົນຍັງປະຕິບັດໃນທາງເສຍຫາຍ

[3]ພະອົງຊົງສ້າງປະຕູເທິງຂອງພຣະວິຫານແຫ່ງພຣະຜູ້ເປັນເຈົ້າ ແລະຊົງກະທຳການກໍ່ສ້າງ
ຫລາຍບ່ອນທີ່ກຳແພງຕາແສງໂອເຟນ [4]ຫລາຍກວ່ານັ້ນອີກ ພະອົງຊົງສ້າງຫົວເມືອງໃນແຖບພູ-
ເຂົາແຫ່ງຢູດາ ແລະສ້າງປ້ອມກັບຫໍຄອຍຕາມປ່າໄມ້

[5]ແລະພະອົງຊົງສູ້ຮົບກັບກະສັດຄົນອຳໂມນ ແລະຊົງຊະນະ ໃນປີນັ້ນຄົນອຳໂມນໄດ້ຖວາຍ
ເງິນແກ່ພະອົງໜຶ່ງຮ້ອຍຕະລັນຕົນ ແລະເຂົ້າສາລີໜຶ່ງໝື່ນ ງິວກັບເຂົ້າບາເລໜຶ່ງໝື່ນ ຄົນອຳ-
ໂມນໄດ້ຖວາຍເທົ່າກັນໃນປີທີສອງແລະໃນປີທີສາມ

[6]ໂຢທາມຈຶ່ງຊົງມີກຳລັງຫລາຍຂຶ້ນ ເພາະພະອົງຊົງກະກຽມທາງທັງຫລາຍຂອງພະອົງຕໍ່
ພຣະພັກພຣະຜູ້ເປັນເຈົ້າພຣະເຈົ້າຂອງພະອົງ [7]ສ່ວນພະລາຊະກິດນອກນັ້ນຂອງໂຢທາມ
ແລະການສົງຄາມທັງໝົດຂອງພະອົງ, ກິດຈະກຳປະຈຳວັນຂອງພະອົງ ກໍມີບັນທຶກໄວ້ໃນໜັງສື
ຂອງກະສັດແຫ່ງອິສຣາເອນ ແລະຢູດາ [8]ເມື່ອພະອົງຊົງເລີ່ມປົກຄອງ ພະອົງມີອາຍຸຊາວຫ້າປີ
ແລະຊົງປົກຄອງໃນເຢຣູຊາເລັມສິບຫົກປີ [9]ໂຢທາມລ່ວງລັບໄປຢູ່ກັບບັນພະບູລຸດຂອງພະອົງ
ພວກເຂົາຝັງພະສົບໄວ້ໃນນະຄອນດາວິດ ແລະອາຮາດລູກຊາຍຂອງພະອົງຂຶ້ນປົກຄອງແທນ

[ກ]2 ປະຫວັດກະສັດ 15:32

# ບົດທີ 28

## ໂຢທາມຊົງປົກຄອງເໜືອຢູດາ[ກ]

[1]ເມື່ອ ອາຮາດ ຊົງ ເລີ່ມປົກຄອງ ພະອົງມີອາຍຸຊາວປີ ແລະຊົງປົກຄອງໃນ ເຢຣູຊາເລັມ ສິບຫົກ
ປີ ພະອົງບໍ່ໄດ້ຊົງກະທຳສິ່ງທີ່ພໍພຣະໄທໃນສາຍພຣະເນດຂອງ ພຣະຜູ້ເປັນເຈົ້າ ຄືກັບ ດາວິດ
ບັນພະບູລຸດຂອງພະອົງ [2]ແຕ່ຊົງດຳເນີນຕາມທາງຂອງກະສັດ ແຫ່ງ ອິສຣາເອນ ພະອົງໄດ້ຊົງ
ສ້າງຮູບ ເຄົາລົບສຳລັບບັນດາ ພະບາອານ [3]ແລະຊົງ ເຜົາ ເຄື່ອງຫອມທີ່ພູເຂົາລູກຊາຍຂອງ ຮິນ-
ໂນມ ຊົງ ເຜົາບັນດາລູກຊາຍຂອງພະອົງໃນໄຟ ຕາມການເຮັດອັນໜ້າກຽດຊັງຂອງບັນດາປະ-
ຊາຊາດ ຊຶ່ງ ພຣະຜູ້ເປັນເຈົ້າ ຊົງຂັບໄລ່ອອກໄປເສຍໃຫ້ພົ້ນໜ້າປະຊາຊົນ ອິສຣາເອນ [4]ພະອົງ
ຊົງຖວາຍສັດບູຊາ ແລະຊົງເຜົາເຄື່ອງຫອມທີ່ປູຊະນີຍະສະຖານສູງ ແລະເທິງໂນນພູ ກ້ອງຕົ້ນ-
ໄມ້ຂຽວສົດທຸກຕົ້ນ

## ອາຮາດປົກຄອງເໜືອຢູດາ[ຂ]

[5]ເພາະສະນັ້ນ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງພະອົງ ຈຶ່ງຊົງ ມອບພະອົງ ໄວ້ໃນພະຫັດຂອງ
ກະສັດ ແຫ່ງ ຊີເຣຍ ຜູ້ຊົງຊະນະພະອົງ ແລະ ຈັບປະຊາຊົນຂອງພະອົງ ເປັນຊະເລີຍ ຈຳນວນ
ຫລາຍນຳມາຍັງ ດາມາເຊ ແລະຊົງຖືກມອບໄວ້ໃນພະຫັດຂອງກະສັດ ແຫ່ງ ອິສຣາເອນ ຜູ້ຊະ-
ນະພະອົງ ດ້ວຍການ ຂ້າຟັນຢ່າງ ໃຫຍ່ຫລວງ [6]ເພາະວ່າ ເປກາ ລູກຊາຍ ເຣມາລີຢາ ໄດ້ຂ້າໜຶ່ງ
ແສນສອງໝື່ນຄົນໃນ ຢູດາ ໃນມື້ດຽວ ທັງໝົດເປັນທະຫານເກັ່ງກ້າ ເພາະພວກເຂົາທັງຫລາຍໄດ້
ປະຖິ້ມ ພຣະຜູ້ເປັນເຈົ້າ ພຣະເຈົ້າ ແຫ່ງບັນພະບູລຸດຂອງຕົນ [7]ແລະ ຊິກຣີ ທະຫານກ້າຂອງ ເອ-
ຟຣາຢິມ ໄດ້ສັງຫານ ມາອາເສຢາ ລູກຊາຍຂອງກະສັດ ແລະ ອັດຊະຣິການ ຫົວໜ້າປົກຄອງກົມ
ມະວັງ ແລະ ເອນການາ ຜູ້ຮອງກະສັດ [8]ຄົນ ອິສຣາເອນ ໄດ້ຈັບຍາດພີ່ນ້ອງຂອງຕົນເປັນຊະເລີຍ
ສອງແສນຄົນ ມີຜູ້ຍິງ ລູກຊາຍ ແລະລູກສາວ ແລະໄດ້ຍຶດສິ່ງຂອງເປັນຈຳນວນຫລາຍມາຈາກ
ພວກເຂົານຳມາຍັງ ຊາມາເຣຍ

[9]ແຕ່ຜູ້ທຳນວາຍ ຄົນໜຶ່ງຂອງ ພຣະຜູ້ເປັນເຈົ້າ ຢູ່ບ່ອນນັ້ນຊື່ວ່າ ໂອເດັດ ເພິ່ນອອກໄປພົບ
ກອງທັບທີ່ມາຊາມາເຣຍ ແລະເວົ້າກັບພວກເຂົາວ່າ "ເບິ່ງແມ ເພາະ ພຣະຜູ້ເປັນເຈົ້າ ພຣະເຈົ້າ
ແຫ່ງບັນພະບູລຸດຂອງທ່ານທັງຫລາຍຊົງຮ້າຍຕໍ່ ຢູດາ ພະອົງຊົງ ມອບພວກເຂົາ ໄວ້ໃນມືຂອງ
ທ່ານ ແຕ່ທ່ານທັງຫລາຍໄດ້ສັງຫານພວກເຂົາເສຍດ້ວຍຄວາມຮ້າຍຊຶ່ງຂຶ້ນໄປເຖິງຟ້າສະຫວັນ
[10]ແລະບັດນີ້ ທ່ານທັງຫລາຍ ເຈດຕະນາຈະຂົ່ມເຫງປະຊາຊົນ ແຫ່ງ ຢູດາ ແລະ ເຢຣູຊາເລັມ ໃຫ້
ເປັນຂ້າທາດ ຊາຍ ແລະຂ້າທາດຍິງຂອງທ່ານ ຕົວທ່ານເອງບໍ່ມີບາບຕໍ່ ພຣະຜູ້ເປັນເຈົ້າ ພຣະ-
ເຈົ້າ ຂອງທ່ານຫລື [11]ບັດນີ້ ຂໍຟັງຂ້າພະເຈົ້າ ແລະຂໍສົ່ງຊະເລີຍຊຶ່ງທ່ານໄດ້ນຳມາຈາກຍາດພີ່-
ນ້ອງຂອງທ່ານກັບໄປ ເພາະວ່າພະພິໂລດອັນ ແຮງກ້າຂອງ ພຣະຜູ້ເປັນເຈົ້າ ຢູ່ ເໜືອທ່ານທັງ-
ຫລາຍ" [12]ບາງຄົນໃນຫົວໜ້າຄົນ ເອຟຣາຢິມ ຄື ອາຊາຣີຢາ ລູກຊາຍ ໂຢຮານານ ເບເຣກີຢາ ລູກ
ຊາຍ ເມຊິນເລໂມດ ເຢຮີຊະກີຢາ ລູກຊາຍ ຊານລູມ ແລະ ອາມາສາ ລູກຊາຍ ຮັດໄລ ໄດ້ຢືນຂຶ້ນ
ຂັດຂວາງບັນດາຜູ້ທີ່ກັບມາຈາກສົງຄາມ [13]ໂດຍເວົ້າກັບພວກເຂົາວ່າ "ເຈົ້າຢ່ານຳຊະເລີຍເຂົ້າມາ

[ກ]2 ປະຫວັດກະສັດ 15:32-38 [ຂ]2 ປະຫວັດກະສັດ 16:1

ບ່ອນນີ້ ເພາະເຈົ້າມຸ້ງໝາຍທີ່ຈະນຳໂທດບາບມາເໜືອເຮົາຕໍ່ພຣະຜູ້ເປັນເຈົ້າ ເພີ່ມເຂົ້າກັບບາບ
ແລະກຳຊົ່ວໃນປະຈຸບັນຂອງເຮົາ ເພາະວ່າກຳຊົ່ວຂອງເຮົາກໍໃຫຍ່ຫລາຍ ພຣະພິໂລດອັນແຮງ
ກ້າຕໍ່ອິສຣາເອນມີຢູ່ແລ້ວ” 14ເພາະສະນັ້ນ ຜູ້ຖືອາວຸດຈຶ່ງຖິ້ມຊະເລີຍ ແລະສິ່ງຂອງທີ່ຍຶດມາຕໍ່-
ໜ້າເຈົ້ານາຍ ແລະຊຸມນຸມຊົນທັງປວງ 15ແລະຜູ້ຊາຍທີ່ຖືກລະບຸຊື່ນັ້ນໄດ້ລຸກຂຶ້ນເອົາເສື້ອຜ້າທີ່
ຍຶດມາໃຫ້ແກ່ຄົນທີ່ເປືອຍກາຍຢູ່ໃນພວກຊະເລີຍ ແລະພວກເຂົາກໍນຸ່ງຫົ່ມໄວ້ ທັງເອົາເກີບໃຫ້
ພວກເຂົາໃສ່ ແລະຈັດຫາອາຫານ ເຄື່ອງດື່ມໃຫ້ ທັງທາບາດແຜໃຫ້ພວກເຂົາ ແລະນຳຄົນທີ່
ອ່ອນເພຍຂີ່ລາ ນຳພວກເຂົາກັບມາຫາຍາດພີ່ນ້ອງຂອງພວກເຂົາທີ່ເມືອງເຢຣິໂກ ຄືເມືອງຕົ້ນ
ຕານ ແລະພວກເຂົາທັງຫລາຍກໍກັບໄປຊາມາເຣຍ

## ອາຮາດກັບເປກາສູ້ຮົບກັນ[ກ]

16ເທື່ອນັ້ນກະສັດ ອາຮາດ ຊົງໃຊ້ໃຫ້ໄປຫາກະສັດແຫ່ງ ອັດຊີເຣຍ ເພື່ອຂໍຄວາມຊ່ວຍເຫລືອ
17ເພາະຄົນ ເອໂດມ ໄດ້ບຸກລຸກເຂົ້າມາອີກ ໄດ້ໂຈມຕີຢູດາ ແລະຈັບໄປເປັນຊະເລີຍນຳ 18ຄົນ
ຟີລິດສະຕິນໄດ້ເຂົ້າປຸ້ນຫົວເມືອງໃນພູເຂົາ ແລະທີ່ພາກໃຕ້ຂອງຢູດາ ແລະໄດ້ຍຶດເມືອງເບັດ-
ເຊເມັດ ອາຢາໂລນ ເກເດໂຣດ ໂຊໂກກັບຊົນນະບົດ ຕິມນາກັບຊົນນະບົດ ແລະທັງກິມໂຊ
ກັບຊົນນະບົດ ແລະພວກເຂົາກໍຕັ້ງເຕັນຢູ່ບ່ອນນັ້ນ 19ເພາະພຣະຜູ້ເປັນເຈົ້າຊົງກະທຳໃຫ້ຢູດາ
ອ່ອນແອລົງດ້ວຍອາຮາດກະສັດແຫ່ງອິສຣາເອນ ເພາະອາຮາດຊົງປ່ອຍໃຫ້ຫລົງອຳນາດຢູ່ໃນ
ຢູດາ ແລະບໍ່ສັດຊື່ຕໍ່ພຣະຜູ້ເປັນເຈົ້າ 20ສະນັ້ນ ຕິກລັດ-ປີເລເສກະສັດແຫ່ງອັດຊີເຣຍຈຶ່ງຍົກ
ທັບຂຶ້ນມາຕໍ່ສູ້ກັບພະອົງ ແລະເຮັດໃຫ້ພະອົງທຸກພະໄທແທນທີ່ຈະສະໜັບສະໜູນພະອົງໃຫ້
ເຂັ້ມແຂງ 21ເພາະ ອາຮາດ ຊົງ ເອົາສິ່ງ ຂອງ ສ່ວນ ໜຶ່ງ ຈາກ ພຣະວິຫານ ຂອງ ພຣະຜູ້ເປັນເຈົ້າ
ແລະຈາກລາຊະສຳນັກຈາກເຈົ້ານາຍທີ່ຖວາຍເປັນບັນນາການແກ່ກະສັດຂອງອັດຊີເຣຍ ແຕ່ບໍ່
ເປັນປະໂຫຍດແກ່ພຣະອົງ

22ໃນຄາວທຸກຍາກນັ້ນ ພະອົງແຮ່ງບໍ່ສັດຊື່ຕໍ່ພຣະຜູ້ເປັນເຈົ້າ ຄືກະສັດອາຮາດອົງດຽວກັນນີ້
ແຫລະ 23ເພາະພະອົງຊົງຖວາຍສັດບູຊາແກ່ພະຂອງເມືອງດາມາເຊ ຊຶ່ງໄດ້ໃຫ້ພະອົງພ່າຍແພ້
ແລະກ່າວວ່າ “ເພາະວ່າພະຂອງກະສັດຊີເຣຍໄດ້ຊ່ວຍພວກເຂົາທັງຫລາຍ ເຮົາຈຶ່ງຈະຖວາຍສັດ
ບູຊາແກ່ພະເຫລົ່ານັ້ນ ເພື່ອຈະຊ່ວຍເຮົາ” ແຕ່ພະເຫລົ່ານັ້ນເປັນເຄື່ອງທຳລາຍພະອົງ ແລະອິ-
ສຣາເອນທັງປວງດ້ວຍ 24ອາຮາດຊົງຮວບຮວມເຄື່ອງໃຊ້ຂອງພຣະວິຫານແຫ່ງພຣະເຈົ້າ ແລະ
ຕັດເຄື່ອງໃຊ້ແຫ່ງພຣະວິຫານຂອງພຣະເຈົ້າເປັນຕ່ອນໆ ພະອົງຊົງປິດປະຕູພຣະວິຫານຂອງ
ພຣະຜູ້ເປັນເຈົ້າ ແລະຊົງສ້າງແທ່ນບູຊາສຳລັບພະອົງທຸກແຈເມືອງເຢຣູຊາເລັມ 25ພະອົງຊົງ
ສ້າງປູຊະນີຍະສະຖານສູງໃນຫົວເມືອງຂອງຢູດາທຸກຫົວເມືອງ ເພື່ອເຜົາເຄື່ອງຫອມຖວາຍພະ
ອື່ນ ເຮັດໃຫ້ພຣະຜູ້ເປັນເຈົ້າພຣະເຈົ້າແຫ່ງບັນພະບູລຸດຂອງພະອົງຊົງພຣະພິໂລດ

## ຄົນເອໂດມກັບຄົນຟີລິດສະຕິນໄດ້ບຸກລຸກຢູດາ

26ສ່ວນພະລາຊະກິດນອກນັ້ນຂອງພະອົງ ແລະກິດຈະກຳປະຈຳວັນຂອງພະອົງທັງໝົດ ຕັ້ງ-
ແຕ່ຕົ້ນຈົນຈົບ ກໍມີບັນທຶກໄວ້ໃນໜັງສືຂອງກະສັດແຫ່ງຢູດາ ແລະອິສຣາເອນ 27ແລະອາຮາດ

[ກ]2 ປະຫວັດກະສັດ 16:56

ກໍລ່ວງລັບໄປຢູ່ກັບບັນພະບູລຸດຂອງພະອົງ ພວກເຂົາຝັງພະສົບໄວ້ໃນກຸງ ເຢຣູຊາເລັມ ແຕ່ເຂົາ
ບໍ່ໄດ້ນຳພະສົບໄປໄວ້ໃນຂຸມຝັງສົບຂອງກະສັດແຫ່ງ ອິສຣາເອນ ແລະ ເຮເຊກີຢາ ລູກຊາຍຂອງ
ພະອົງໄດ້ຂຶ້ນປົກຄອງແທນພະອົງ

# ບົດທີ 29

## ການສິ້ນພະຊົນຂອງອາຣາດ ເຮເຊກີຢາປົກຄອງແທນພະອົງ[ກ]

1ເມື່ອ ເຮເຊກີຢາ ມີອາຍຸຊາວຫ້າປີ ພະອົງຊົງ ເລີ່ມປົກຄອງ ແລະຊົງປົກຄອງໃນ ເມືອງ ເຢຣູ-
ຊາເລັມ ຊາວ ເກົ້າປີ ພະມານຂອງພະອົງຊົງພະນາມວ່າ ອາບີຢາ ລູກສາວຂອງ ເຊຄາຣີຢາ
2ແລະພະອົງຊົງກະທຳສິ່ງທີ່ພໍພຣະໄທໃນສາຍພຣະເນດຂອງ ພຣະຜູ້ເປັນເຈົ້າ ຕາມທີ່ ດາວິດ ບັນ-
ພະບູລຸດຂອງພະອົງໄດ້ຊົງກະທຳທຸກປະການ
3ໃນປີທຳອິດ ແຫ່ງລາຊະການຂອງພະອົງ ໃນ ເດືອນທຳອິດ ພະອົງຊົງ ເປີດປະຕູພຣະວິຫານ
ຂອງ ພຣະຜູ້ເປັນເຈົ້າ ແລະໄດ້ຊົງສ້ອມແປງປະຕູນັ້ນ 4ພະອົງຊົງນຳປະໂລຫິດ ແລະຄົນ ເລວີ
ເຂົ້າມາ ຊົງໃຫ້ພວກເຂົາຊຸມນຸມທີ່ຖະໜົນທາງທິດຕາເວັນອອກ 5ໂດຍກ່າວກັບພວກເຂົາວ່າ
“ຄົນ ເລວີ ເອີຍ ຂໍຟັງເຮົາ ຈົ່ງຊຳລະຕົວໃຫ້ບໍລິສຸດ ແລະຊຳລະພຣະວິຫານຂອງ ພຣະຜູ້ເປັນ-
ເຈົ້າ ພຣະເຈົ້າ ແຫ່ງບັນພະບູລຸດຂອງທ່ານ ໃຫ້ບໍລິສຸດ ແລະ ຂົນສິ່ງ ເປື້ອນເປິອອກໄປຈາກສະ-
ຖານທີ່ບໍລິສຸດ 6ເພາະບິດາຂອງເຮົາທັງຫລາຍໄດ້ກະທຳການບໍ່ສັດຊື່ ແລະໄດ້ເຮັດສິ່ງທີ່ຊົ່ວໃນ
ສາຍພຣະເນດ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງເຮົາ ພວກເຂົາໄດ້ປະຖິ້ມພຣະອົງ ແລະຫັນໜ້າໜີ
ໄປຈາກທີ່ປະທັບຂອງ ພຣະຜູ້ເປັນເຈົ້າ ເສຍ 7ພວກເຂົາປິດປະຕູລະບຽງພຣະວິຫານ ແລະໄດ້ດັບ
ຕະກຽງເສຍ ທັງບໍ່ໄດ້ເຜົາເຄື່ອງຫອມ ຫລືຖວາຍເຄື່ອງ ເຜົາບູຊາໃນສະຖານທີ່ບໍລິສຸດແດ່ ພຣະ-
ເຈົ້າ ແຫ່ງ ອິສຣາເອນ 8ເພາະສະນັ້ນ ພຣະພິໂລດຂອງ ພຣະຜູ້ເປັນເຈົ້າ ຈຶ່ງມາເຖິງ ຢູດາ ແລະ
ເຢຣູຊາເລັມ ພຣະອົງຊົງ ເຮັດໃຫ້ເປັນທີ່ໜ້າຢ້ານກົວ ແລະເປັນທີ່ເຍາະເຍີ້ຍຕາມທີ່ທ່ານໄດ້ເຫັນ
ກັບຕາຂອງທ່ານແລ້ວ 9ເບິ່ງແມ ບິດາທັງຫລາຍຂອງເຮົາໄດ້ລົ້ມລົງດ້ວຍດາບ ແລະລູກຊາຍລູກ
ສາວກັບ ເມຍຂອງ ເຮົາໄດ້ຕົກເປັນຊະເລີຍ ເພາະ ເຫດນີ້ 10ບັດນີ້ ເຮົາມີໃຈປະສົງທີ່ຈະ ເຮັດຄຳ-
ໝັ້ນສັນຍາກັບ ພຣະຜູ້ເປັນເຈົ້າ ພຣະເຈົ້າ ແຫ່ງ ອິສຣາເອນ ເພື່ອວ່າພຣະພິໂລດອັນແຮງກ້າຂອງ
ພຣະອົງຈະຫັນໄປຈາກເຮົາ 11ລູກຊາຍທັງຫລາຍຂອງຂ້າພະເຈົ້າເອີຍ ຢ່າເມີນເສີຍເພາະ ພຣະ-
ຜູ້ເປັນເຈົ້າ ໄດ້ຊົງ ເລືອກທ່ານ ໃຫ້ຢືນຢູ່ສະເພາະພຣະພັກຂອງພຣະອົງ ເພື່ອບົວລະບັດພຣະອົງ
ແລະເຜົາເຄື່ອງຫອມ”

12ແລ້ວຄົນ ເລວີ ກໍລຸກຂຶ້ນ ຄື ມາຮາດ ລູກຊາຍ ອາມາສາຍ ແລະ ໂຢເອນ ລູກຊາຍ ອາຊາຣີຢາ
ຜູ້ເປັນລູກຫລານຂອງ ໂກຮາດ ແລະລູກຫລານຂອງ ເມຣາຣີ ກີເຊ ລູກຊາຍ ອັບດີ ແລະ ອາຊາ-
ຣີຢາ ລູກຊາຍ ເຢຮັນເລເລນ ແລະຂອງຄົນ ເກໂຊນ ມີ ໂຢອາ ລູກຊາຍ ຊິມມາ ແລະ ເອເດັນ ລູກ
ຊາຍ ໂຢອາ

13ລູກຫລານຂອງ ເອລີຊາຟັນ ມີຊິມຣີ ແລະ ເຢອູເອນ ແລະລູກຫລານຂອງ ອາສັບ ມີເຊ-

[ກ]2 ປະຫວັດກະສັດ 16:19-20

ຄາຣີຢາ ແລະ ມັດຕານີຢາ

14ລູກຫລານຂອງ ເຮມານ ມີ ເຢຮູເອນ ແລະ ຊີເມອີ ແລະລູກຫລານຂອງ ເຢດູທູນ ມີ ເຊ-
ມາຢາ ແລະ ອຸດຊີເອນ

15ພວກເຂົາທັງຫລາຍຮວບຮວມພີ່ນ້ອງຂອງຕົນ ແລ້ວຊຳລະຕົນໃຫ້ບໍລິສຸດ ແລະເຂົ້າໄປຕາມ
ທີ່ກະສັດໄດ້ຊົງບັນຊາໂດຍພຣະທຳຂອງ ພຣະຜູ້ເປັນເຈົ້າ ໃຫ້ຊຳລະພຣະວິຫານຂອງ ພຣະຜູ້-
ເປັນເຈົ້າ ໃຫ້ບໍລິສຸດ 16ປະໂລຫິດໄດ້ເຂົ້າໄປຂ້າງໃນຂອງພຣະວິຫານຂອງ ພຣະຜູ້ເປັນເຈົ້າ ເພື່ອ
ຊຳລະ ໃຫ້ບໍລິສຸດ ພວກ ເຂົານຳສິ່ງທີ່ ເປື້ອນເປິທີ່ພົບ ເຫັນໃນພຣະວິຫານ ຂອງ ພຣະຜູ້ເປັນເຈົ້າ
ອອກມາທີ່ ເດີ່ນພຣະວິຫານຂອງ ພຣະຜູ້ເປັນເຈົ້າ ແລະຄົນ ເລວີກໍຂົນເອົາສິ່ງຂອງນັ້ນອອກໄປ
ຍັງຫ້ວຍນ້ຳ ກິດໂຣນ 17ພວກເຂົາເລີ່ມຊຳລະໃນມື້ທຳອິດຂອງເດືອນທຳອິດ ແລະໃນວັນທີແປດ
ຂອງເດືອນນັ້ນ ພວກເຂົາມາຍັງລະບຽງຂອງ ພຣະຜູ້ເປັນເຈົ້າ ພວກເຂົາຊຳລະພຣະວິຫານຂອງ
ພຣະຜູ້ເປັນເຈົ້າຢູ່ແປດມື້ ແລະໃນມື້ທີສິບຫົກຂອງເດືອນທຳອິດ ກໍສຳເລັດ 18ແລ້ວເຂົ້າໄປຫາ
ກະສັດ ເຮເຊກີຢາ ໂດຍທູນວ່າ “ຂ້າພະອົງທັງຫລາຍໄດ້ເຮັດຄວາມສະອາດພຣະວິຫານຂອງ
ພຣະຜູ້ເປັນເຈົ້າ ສຳເລັດ ແລ້ວ ທັງ ແທ່ນ ເຄື່ອງ ເຜົາບູຊາ ແລະ ເຄື່ອງໃຊ້ຂອງ ແທ່ນນັ້ນທັງໝົດ
ແລະ ໂຕະ ເຂົ້າຈີ່ໜ້າພຣະພັກ ທັງ ເຄື່ອງ ໃຊ້ຂອງ ໂຕະນັ້ນ 19ເຄື່ອງໃຊ້ທັງໝົດທີ່ກະສັດ ອາຣາດ
ເລືອກຖິ້ມໃນລາຊະການຂອງພະອົງ ຕອນທີ່ພະອົງບໍ່ສັດຊື່ຕໍ່ ພຣະເຈົ້າ ຂ້າພະອົງທັງຫລາຍໄດ້
ຕຽມພ້ອມ ແລະໄດ້ຊຳລະແລ້ວ ເບິ່ງແມ ສິ່ງຂອງເຫລົ່ານັ້ນກໍຢູ່ໜ້າແທ່ນບູຊາຂອງ ພຣະຜູ້ເປັນ-
ເຈົ້າ”

20ແລ້ວກະສັດ ເຮເຊກີຢາ ຊົງລຸກຂຶ້ນ ແຕ່ເຊົ້າ ແລະຮວບຮວມເອົາເຈົ້ານາຍຂອງ ເມືອງໃຫ້ໄປ
ນະມັດສະການ ພຣະເຈົ້າ ໃນພຣະວິຫານອີກ ແລະສະເດັດຂຶ້ນໄປໃນພຣະວິຫານຂອງ ພຣະຜູ້-
ເປັນເຈົ້າ 21ພວກເຂົາໄດ້ນຳງົວເຖິກເຈັດໂຕ ແກະຜູ້ເຈັດໂຕ ລູກແກະເຈັດໂຕ ແລະແບ້ຜູ້ເຈັດ
ໂຕເປັນ ເຄື່ອງບູຊາໄຖ່ບາບສຳລັບລາຊະອານາຈັກ ສະຖານທີ່ບໍລິສຸດ ແລະຢູດາ ພະອົງຊົງ
ບັນຊາໃຫ້ລູກຫລານຂອງ ອາໂຣນ ຄືປະໂລຫິດໃຫ້ຖວາຍຂອງ ເຫລົ່ານັ້ນ ເທິງ ແທ່ນບູຊາຂອງ
ພຣະຜູ້ເປັນເຈົ້າ 22ພວກ ເຂົາຈຶ່ງຂ້າງົວເຖິກ ແລະປະໂລຫິດກໍຮັບ ເລືອດຊິດໃສ່ທີ່ ແທ່ນບູຊາ
ພວກເຂົາທັງຫລາຍຂ້າແກະຜູ້ ແລະເອົາເລືອດຂອງມັນຊິດໃສ່ແທ່ນບູຊາ ແລະຂ້າລູກແກະ ເອົາ
ເລືອດຂອງມັນຊິດໃສ່ແທ່ນບູຊາ 23ແລ້ວແບ້ຜູ້ສຳລັບເປັນເຄື່ອງບູຊາໄຖ່ບາບນັ້ນ ພວກເຂົານຳ
ມາໃຫ້ກະສັດ ແລະທີ່ປະຊຸມ ພວກເຂົາທັງຫລາຍກໍເອົາມືຂອງຕົນວາງເທິງແບ້ນັ້ນ 24ປະໂລຫິດ
ກໍຂ້າແບ້ເສຍ ແລະເອົາເລືອດຂອງມັນເຮັດການຄືນດີກັນເທິງແທ່ນນັ້ນ ເພື່ອເຮັດການລຶບລ້າງ
ມົນທິນບາບໃຫ້ ອິສຣາເອນ ທັງປວງ ເພາະກະສັດຊົງບັນຊາວ່າໃຫ້ເຮັດ ເຄື່ອງ ເຜົາບູຊາ ແລະ
ເຄື່ອງບູຊາໄຖ່ບາບສຳລັບ ອິສຣາເອນ ທັງປວງ

25ແລ້ວພະອົງຊົງໃຫ້ຄົນ ເລວີປະຈຳຢູ່ໃນພຣະວິຫານຂອງ ພຣະຜູ້ເປັນເຈົ້າ ມີແຊ່ງ ພິນໃຫຍ່
ແລະພິນຄູ່ ຕາມບັນຍັດຂອງ ດາວິດ, ຂອງ ຄາດ ຜູ້ທຳນວາຍຂອງກະສັດ ແລະຂອງ ນາທານ ຜູ້
ທຳນວາຍ ເພາະວ່າພຣະບັນຍັດນັ້ນມາຈາກ ພຣະຜູ້ເປັນເຈົ້າ ທາງຜູ້ທຳນວາຍຂອງພຣະອົງ 26ຄົນ
ເລວີກໍຢືນຢູ່ ຖືເຄື່ອງດົນຕີຂອງ ດາວິດ ແລະປະໂລຫິດຖືແກ 27ແລ້ວ ເຮເຊກີຢາ ຊົງບັນຊາວ່າ

ໃຫ້ຖວາຍເຄື່ອງເຜົາບູຊານັ້ນເທິງແທ່ນ ເມື່ອເລີ່ມຖວາຍເຄື່ອງເຜົາບູຊາ ກໍໃຫ້ເລີ່ມຖວາຍເພງແດ່
ພຣະຜູ້ເປັນເຈົ້າ ແລະ ແກກັບ ເຄື່ອງດົນຕີຂອງ ດາວິດ ກະສັດຂອງ ອິສຣາເອນ ກໍ ເລີ່ມດ້ວຍ
28ຊຸມນຸມຊົນທັງໝົດກໍນະມັດສະການ ແລະນັກຮ້ອງກໍຮ້ອງເພງ ແລະຄົນດົນຕີກໍເປົ່າແກ ເຮັດ
ແບບນີ້ຢູ່ຈົນຖວາຍເຄື່ອງເຜົາບູຊາສຳເລັດ

29ເມື່ອການຖວາຍບູຊາສຳເລັດແລ້ວ ກະສັດ ແລະຄົນທັງປວງທີ່ຢູ່ກັບພະອົງກໍກາບລົງນະ-
ມັດສະການ 30ກະສັດ ເຮເຊກີຢາ ແລະ ເຈົ້ານາຍກໍບັນຊາໃຫ້ຄົນ ເລວີ ຮ້ອງເພງສັນລະເສີນ
ພຣະຜູ້ເປັນເຈົ້າ ດ້ວຍຖ້ອຍຄຳຂອງ ດາວິດ ແລະຂອງ ອາສັບ ຜູ້ທຳນວາຍ ພວກເຂົາທັງຫລາຍ
ຮ້ອງເພງສັນລະເສີນດ້ວຍຄວາມຍິນດີ ແລະກົ້ມຫົວລົງນະມັດສະການ 31ແລ້ວ ເຮເຊກີຢາ ກ່າວ
ວ່າ “ບັດນີ້ ທ່ານທັງຫລາຍໄດ້ຊຳລະຕົວຂອງທ່ານໃຫ້ບໍລິສຸດຕໍ່ ພຣະຜູ້ເປັນເຈົ້າ ຈົ່ງເຂົ້າມາໃກ້
ນຳເອົາເຄື່ອງສັດບູຊາ ແລະ ເຄື່ອງບູຊາໂມທະນາພຣະຄຸນມາຍັງພຣະວິຫານຂອງ ພຣະຜູ້ເປັນ-
ເຈົ້າ” ແລະຊຸມນຸມຊົນກໍນຳ ເຄື່ອງສັດບູຊາ ແລະເຄື່ອງບູຊາໂມທະນາພຣະຄຸນ ແລະທຸກຄົນທີ່
ມີໃຈສະໝັກກໍໄດ້ນຳເຄື່ອງເຜົາບູຊາມາ

32ຈຳນວນ ເຄື່ອງ ເຜົາບູຊາທີ່ຊຸມນຸມຊົນນຳມາ ຄືງົວເຖິກ ເຈັດສິບ ໂຕ ແກະຜູ້ໜຶ່ງຮ້ອຍ ໂຕ
ແລະລູກແກະສອງຮ້ອຍ ໂຕ ທັງໝົດນີ້ເປັນ ເຄື່ອງ ເຜົາບູຊາ ແດ່ ພຣະຜູ້ເປັນເຈົ້າ 33ເຄື່ອງບູຊາທີ່
ມອບຖວາຍໄວ້ ມີງົວເຖິກຫົກຮ້ອຍ ໂຕ ແລະ ແກະສາມພັນ ໂຕ 34ແຕ່ມີປະ ໂລຫິດໜ້ອຍ ເກີນໄປ
ຈົນລົກໜັງ ເຄື່ອງ ເຜົາບູຊາທັງໝົດບໍ່ໄດ້ ຄົນ ເລວີ ພີ່ນ້ອງຂອງພວກເຂົາກໍໄດ້ຊ່ວຍຈົນງານສຳເລັດ
ແລະຈົນກວ່າປະ ໂລຫິດຄົນອື່ນຈະສຳເລັດການຊຳລະຕົນໃຫ້ບໍລິສຸດ ເພາະ ໃນການຊຳລະຕົນນັ້ນ
ຄົນ ເລວີ ຈິງ ຈັງຫລາຍກວ່າພວກປະ ໂລຫິດ 35ນອກຈາກ ເຄື່ອງ ເຜົາບູຊາຈຳນວນຫລວງຫລາຍ
ແລ້ວ ຍັງມີໄຂມັນຂອງເຄື່ອງບູຊາເພື່ອຄວາມສາມັກຄີທຳ ແລະມີເຄື່ອງດື່ມບູຊາຄູ່ກັບເຄື່ອງເຜົາ
ບູຊາດ້ວຍ ດັ່ງນີ້ແຫລະ ວຽກບົວລະບັດໃນພຣະວິຫານຂອງ ພຣະຜູ້ເປັນເຈົ້າ ກໍຟື້ນຄືນມາອີກ
36ເຮເຊກີຢາ ກັບປະຊາຊົນ ທັງປວງກໍຊົມຊື່ນ ຍິນດີ ດ້ວຍການທີ່ ພຣະເຈົ້າ ໄດ້ຊົງຊ່ວຍປະຊາຊົນ
ເພາະເລື່ອງນີ້ເກີດຂຶ້ນ ແລະສຳເລັດລົງຢ່າງວ່ອງໄວ

# ບົດທີ 30

## ເຮເຊກີຢາຊົງປົກຄອງເໜືອຢູດາ[ກ]

1ເຮເຊກີຢາ ຊົງຮັບສັ່ງໄປເຖິງ ອິສຣາເອນ ແລະ ຢູດາ ທັງປວງ ຊົງຂຽນໜັງສືເຖິງ ເອຟຣາຢິມ
ກັບ ມານາເຊ ດ້ວຍວ່າພວກເຂົາທັງຫລາຍຄວນຈະມາພຣະວິຫານຂອງ ພຣະຜູ້ເປັນເຈົ້າ ທີ່ ເຢຣູ-
ຊາເລັມ ເພື່ອຈະຖືເທດສະການ ປັດສະຄາ ຖວາຍແດ່ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງ ອິສຣາເອນ
2ເພາະວ່າກະສັດ ແລະ ເຈົ້ານາຍຂອງພະອົງ ທັງຊຸມນຸມຊົນທັງປວງໃນ ເຢຣູຊາເລັມ ໄດ້ປຶກສາ
ກັນທີ່ຈະຖືເທດສະການ ປັດສະຄາ ໃນ ເດືອນທີສອງ 3ພວກເຂົາຈະຖືປັດສະຄາ ຕາມກຳນົດບໍ່ໄດ້
ເພາະວ່າພວກປະ ໂລຫິດຍັງບໍ່ໄດ້ຊຳລະຕົນໃຫ້ບໍລິສຸດພຽງພໍແກ່ຈຳນວນ ແລະປະຊາຊົນຍັງບໍ່ໄດ້
ຊຸມນຸມກັນໃນ ເຢຣູຊາເລັມ ເທື່ອ 4ແຜນງານນັ້ນກໍເປັນທີ່ພໍໃຈແກ່ກະສັດ ແລະຊຸມນຸມຊົນທັງປວງ

[ກ]2 ກະສັດ 18:1

5ພວກເຂົາຈຶ່ງລົງມັດຕິໃຫ້ເຮັດປະກາດອອກໄປທົ່ວອິສຣາເອນ ຕັ້ງແຕ່ເບເອ-ເຊບາຮອດເມືອງ
ດານວ່າ ປະຊາຊົນຄວນມາຖືປັດສະຄາຖວາຍແດ່ພຣະຜູ້ເປັນເຈົ້າ ພຣະເຈົ້າແຫ່ງອິສຣາເອນ
ທີ່ເຢຣູຊາເລັມ ເພາະພວກເຂົາບໍ່ໄດ້ຖືເປັນເວລາດົນຕາມທີ່ໄດ້ກຳນົດໄວ້ 6ຄົນແລ່ນໜັງສືຈຶ່ງ
ອອກໄປທົ່ວອິສຣາເອນ ແລະຢູດາ ຖືໜັງສືຈາກກະສັດ ແລະບັນດາເຈົ້ານາຍຂອງພະອົງ
ເພາະກະສັດໄດ້ຊົງບັນຊາວ່າ “ຊົນອິສຣາເອນເອີຍ ຈົ່ງກັບມາຫາພຣະຜູ້ເປັນເຈົ້າ ພຣະເຈົ້າ
ຂອງອັບຣາຮາມ ອີຊາກ ແລະຢາໂຄບ ເພື່ອພຣະອົງຈະຖອຍຫລັງກັບມາຫາຄົນສ່ວນທີ່ເຫລືອ
ຢູ່ຂອງທ່ານ ຜູ້ຊຶ່ງລອດພົ້ນຈາກພະຫັດຂອງກະສັດແຫ່ງອັດຊີເຣຍ 7ຢ່າໃຫ້ເປັນຄືພໍ່ ແລະພີ່-
ນ້ອງຂອງທ່ານຜູ້ບໍ່ສັດຊື່ຕໍ່ພຣະຜູ້ເປັນເຈົ້າ ພຣະເຈົ້າແຫ່ງບັນພະບູລຸດຂອງຕົນ ພຣະອົງຈຶ່ງຊົງ
ມອບພວກເຂົາໄວ້ໃຫ້ປະສົບກັບຄວາມຈິບຫາຍຕາມທີ່ທ່ານເຫັນຢູ່ 8ແລະບັດນີ້ ຢ່າຄໍແຂງຄືພໍ່
ຂອງທ່ານທັງຫລາຍເລີຍ ແຕ່ຈົ່ງຍອມມອບຕົວທ່ານແດ່ພຣະຜູ້ເປັນເຈົ້າ ແລະມາໃນສະຖານທີ່
ບໍລິສຸດຂອງພຣະອົງ ຊຶ່ງພຣະອົງຊົງຊຳລະໄວ້ໃຫ້ບໍລິສຸດເປັນນິດ ແລະ ບົວລະບັດພຣະຜູ້ເປັນ-
ເຈົ້າ ພຣະເຈົ້າຂອງທ່ານ ເພື່ອພຣະພິໂລດອັນແຮງກ້າຂອງພຣະອົງຈະຫັນໄປເສຍຈາກທ່ານ
9ເພາະຖ້າທ່ານທັງຫລາຍຫັນໜ້າກັບມາຫາພຣະຜູ້ເປັນເຈົ້າ ພີ່ນ້ອງຂອງທ່ານ ແລະລູກຫລານ
ຂອງທ່ານຈະປະສົບກັບຄວາມເມດຕາຈາກຜູ້ທີ່ຈັບພວກເຂົາໄປເປັນຊະເລີຍ ແລະຈະໄດ້ກັບມາ
ໃນແຜ່ນດິນນີ້ອີກ ເພາະພຣະຜູ້ເປັນເຈົ້າ ພຣະເຈົ້າຂອງທ່ານຊົງພຣະເມດຕາ ແລະກະລຸນາ
ຖ້າທ່ານກັບມາຫາພຣະອົງ ພຣະອົງຈະບໍ່ຊົງຫັນພຣະພັກໄປຈາກທ່ານ”

10ຄົນແລ່ນໜັງສືຈຶ່ງໄປຕາມຫົວເມືອງຕ່າງໆທົ່ວແຜ່ນດິນເອຟຣາຢິມ ແລະມານາເຊ ໄກໄປ
ຈົນຮອດເຊບູລູນ ແຕ່ຄົນທັງຫລາຍກໍຫົວເຍາະເຍີ້ຍພວກເຂົາ 11ມີແຕ່ຄົນອາເຊ ມານາເຊ
ແລະເຊບູລູນບາງຄົນທີ່ຖ່ອມຕົວ ແລະມາເຢຣູຊາເລັມ 12ພຣະຫັດຂອງພຣະເຈົ້າຢູ່ເໜືອຢູດາ
ໂດຍຊົງໃຫ້ພວກເຂົາເປັນໃຈດຽວກັນທີ່ຈະເຮັດຕາມທີ່ກະສັດ ແລະເຈົ້ານາຍໄດ້ບັນຊາໄວ້ຕາມ
ພຣະທຳຂອງພຣະຜູ້ເປັນເຈົ້າ 13ປະຊາຊົນເປັນຈຳນວນຫລາຍມາປະຊຸມກັນໃນເຢຣູຊາເລັມ
ເພື່ອຖືເທດສະການກິນເຂົ້າຈີ່ບໍ່ມີເຊື້ອແປ້ງໃນເດືອນທີສອງ ເປັນການຊຸມນຸມທີ່ໃຫຍ່ຫລາຍ
14ພວກເຂົາລຸກຂຶ້ນ ແລະໄດ້ກຳຈັດແທ່ນບູຊາທີ່ຢູ່ໃນເຢຣູຊາເລັມ ແລະແທ່ນສຳລັບເຜົາເຄື່ອງ
ຫອມທັງປວງນັ້ນ ພວກເຂົາຂົນໄປຖິ້ມເສຍໃນຫ້ວຍນ້ຳກິດໂຣນ

## ການກະກຽມສຳລັບເທດສະການປັດສະຄາ

15ພວກເຂົາທັງຫລາຍໄດ້ຂ້າແກະປັດສະຄາໃນວັນທີສິບສີ່ຂອງເດືອນທີສອງ ປະໂລຫິດ
ແລະຄົນເລວີກໍຮູ້ສຶກລະອາຍທີ່ຍັງບໍ່ໄດ້ຊຳລະຕົນຈາກມົນທິນ ພວກເຂົາຈຶ່ງຊຳລະຕົວໃຫ້ບໍລິສຸດ
ແລະນຳເຄື່ອງເຜົາບູຊາໃນພຣະວິຫານຂອງພຣະຜູ້ເປັນເຈົ້າ 16ພວກເຂົາເຂົ້າປະຈຳຕຳແໜ່ງທີ່
ເຄີຍເຮັດ ຕາມບົດບັນຍັດຂອງໂມເຊຄົນຂອງພຣະເຈົ້າ ປະໂລຫິດກໍເອົາເລືອດທີ່ຕົນຮັບມາ
ຈາກມືຂອງຄົນເລວີມາຊິດໃສ່ 17ເພາະວ່າມີຫລາຍຄົນໃນຊຸມນຸມຊົນນັ້ນຍັງບໍ່ໄດ້ຊຳລະຕົນໃຫ້ບໍ-
ລິສຸດ ຄົນເລວີຈຶ່ງຕ້ອງຂ້າແກະປັດສະຄາແທນທຸກຄົນທີ່ມີມົນທິນ ເພື່ອເຮັດໃຫ້ບໍລິສຸດຕໍ່ພຣະ-
ຜູ້ເປັນເຈົ້າ 18ເພາະວ່າໃນນັ້ນມີຄົນເປັນຈຳນວນຫລາຍທີ່ມາຈາກເອຟຣາຢິມ ມານາເຊ ອິດ-
ຊາຄາ ແລະເຊບູລູນຍັງບໍ່ໄດ້ຊຳລະຕົນ ເຖິງປານນັ້ນ ພວກເຂົາກໍຍັງຮັບປະທານປັດສະຄາ

ຊື່ງຜິດຕໍ່ຂໍ້ທີ່ກໍານົດໄວ້ ແຕ່ເຮເຊກີຢາຊົງອະທິຖານເພື່ອພວກເຂົາວ່າ “ຂໍພຣະຜູ້ເປັນເຈົ້າຜູ້ປະ-
ເສີດ ຊົງໃຫ້ອະໄພແກ່ທຸກໆຄົນ 19ຜູ້ທີ່ປັກໃຈສະແຫວງຫາພຣະເຈົ້າ ຄືພຣະຜູ້ເປັນເຈົ້າພຣະ-
ເຈົ້າແຫ່ງບັນພະບູລຸດຂອງພວກເຂົາ ເຖິງແມ່ນວ່າ ຈະບໍ່ຊໍາລະຕົວຕາມກົດຂອງຄວາມບໍລິສຸດ
ແຫ່ງສະຖານທີ່ບໍລິສຸດນີ້” 20ພຣະຜູ້ເປັນເຈົ້າຊົງຟັງເຮເຊກີຢາ ແລະຊົງຮັກສາປະຊາຊົນ
21ປະຊາຊົນອິສຣາເອນທີ່ຢູ່ໃນເຢຣູຊາເລັມໄດ້ຖືເທດສະການກິນເຂົ້າຈີ່ບໍ່ມີເຊື້ອແປ້ງເຈັດມື້
ດ້ວຍຄວາມຍິນດີຫລາຍ ແລະຄົນເລວີກັບປະໂລຫິດໄດ້ສັນລະເສີນພຣະຜູ້ເປັນເຈົ້າທຸກມື້
ຮ້ອງເພງເຮັດສຽງດັງດ້ວຍເຄື່ອງດົນຕີຂອງພວກເຂົາຖວາຍແດ່ພຣະຜູ້ເປັນເຈົ້າ 22ຝ່າຍເຮເຊກີ-
ຢາກໍໄດ້ກ່າວໜູນໃຈພວກຄົນເລວີທັງປວງຜູ້ສອນເຖິງຄວາມຮູ້ອັນປະເສີດແຫ່ງພຣະຜູ້ເປັນເຈົ້າ
ພວກເຂົາຈຶ່ງຮັບປະທານອາຫານໃນເທດສະການນັ້ນເຈັດວັນ ໄດ້ຖວາຍສັດເປັນເຄື່ອງບູຊາເພື່ອ
ຄວາມສາມັກຄີທໍາ ແລະສາລະພາບຄວາມຜິດບາບຕໍ່ພຣະຜູ້ເປັນເຈົ້າພຣະເຈົ້າແຫ່ງບັນພະບູ-
ລຸດຂອງຕົນ

## ການຖືເທດສະການປັດສະຄາດ້ວຍຄວາມຍິນດີ

23ແລ້ວຊຸມນຸມຊົນທັງໝົດກໍຕົກລົງກັນທີ່ຈະຖືເທດສະການໄປອີກເຈັດມື້ ພວກເຂົາຈຶ່ງຖືເທດ-
ສະການໄປອີກເຈັດມື້ດ້ວຍຄວາມຍິນດີ 24ເພາະເຮເຊກີຢາກະສັດແຫ່ງຢູດາໄດ້ຊົງປະທານງົວ-
ເຖິກໜຶ່ງພັນໂຕ ແລະແກະເຈັດພັນໂຕແກ່ຊຸມນຸມຊົນ ພວກເຈົ້ານາຍໄດ້ໃຫ້ງົວເຖິກໜຶ່ງພັນໂຕ
ແລະແກະໜຶ່ງໝື່ນໂຕແກ່ຊຸມນຸມຊົນ ແລະປະໂລຫິດເປັນຈໍານວນຫລາຍກໍໄດ້ຊໍາລະຕົນໃຫ້ບໍລິ-
ສຸດ 25ຊຸມນຸມຊົນທັງໝົດຂອງຢູດາ ກັບບັນດາປະໂລຫິດ ແລະຄົນເລວີ ທັງຊຸມນຸມຊົນທັງໝົດ
ທີ່ອອກມາຈາກອິສຣາເອນ ແລະຄົນຕ່າງດ້າວທີ່ອອກມາຈາກແຜ່ນດິນອິສຣາເອນ ແລະຊື່ງຢູ່
ໃນຢູດາກໍຊົມຊື່ນຍິນດີພ້ອມກັນ 26ຈຶ່ງມີຄວາມຍິນດີອັນໃຫຍ່ໃນເຢຣູຊາເລັມ ເພາະຕັ້ງແຕ່ສະ-
ໄໝຂອງໂຊໂລໂມນລູກຊາຍຂອງດາວິດກະສັດແຫ່ງອິສຣາເອນ ບໍ່ເຄີຍມີຢ່າງນີ້ເລີຍໃນເຢຣູ-
ຊາເລັມ 27ແລ້ວບັນດາປະໂລຫິດ ແລະຄົນເລວີໄດ້ລຸກຂຶ້ນອວຍພອນປະຊາຊົນ ສຽງຂອງພວກ
ເຂົາກໍເຖິງພຣະກັນ ແລະຄໍາອະທິຖານຂອງພວກເຂົາກໍຂຶ້ນໄປເຖິງທີ່ປະທັບບໍລິສຸດຂອງພຣະອົງ
ຄືສະຫວັນ

# ບົດທີ 31

## ການຖືເທດສະການປັດສະຄາອີກເຈັດມື້

1ເມື່ອສໍາເລັດງານນີ້ທັງໝົດແລ້ວ ອິສຣາເອນທັງປວງຜູ້ຢູ່ບ່ອນນັ້ນໄດ້ອອກໄປໃນຫົວເມືອງ
ຢູດາ ແລະທໍາລາຍເສົາສັກສິດເປັນທ່ອນໆ ແລະລົ້ມບັນດາເສົາຮູບເຄົາລົບລົງ ທັງທໍາລາຍປູ-
ຊະນີຍະສະຖານສູງລົງ ແລະ ພັງແທ່ນທົ່ວຢູດາ ແລະເບັນຢາມິນທັງໝົດໃນເອຟຣາຢິມກັບ
ມານາເຊ ຈົນພວກເຂົາທໍາລາຍໝົດສິ້ນ ແລ້ວ ປະຊາຊົນອິສຣາເອນທັງປວງກໍກັບໄປໃນຫົວ
ເມືອງຂອງຕົນ ທຸກຄົນກັບໄປຕາມທີ່ດິນຂອງຕົນ

## ການທຳລາຍຮູບເຄົາລົບ[ກ]

2ເຮເຊກີຢາ ໄດ້ຊົງ ຈັດການ ແບ່ງບັນດາປະໂລຫິດ ແລະຄົນ ເລວີ ອອກເປັນໝວດໆ ແຕ່ລະ
ໝວດຕາມໜ້າທີ່ບົວລະບັດຂອງຕົນ ຄືບັນດາປະໂລຫິດ ແລະຄົນ ເລວີ ໃຫ້ເປັນພະນັກງານ
ຝ່າຍເຄື່ອງເຜົາບູຊາ ແລະເຄື່ອງບູຊາເພື່ອຄວາມສາມັກຄີທຳ ໃຫ້ບົວລະບັດ ຖວາຍໂມທະນາ
ພຣະຄຸນ ແລະສັນລະເສີນພາຍໃນປະຕູຄ້າຍຂອງ ພຣະຜູ້ເປັນເຈົ້າ
3ສ່ວນທີ່ກະສັດຊົງບໍລິຈາກຈາກຊັບສິນສ່ວນພະອົງນັ້ນ ເປັນເຄື່ອງເຜົາບູຊາຄືເຄື່ອງເຜົາບູຊາ
ສຳລັບຕອນເຊົ້າແລະຕອນແລງ ແລະເຄື່ອງເຜົາບູຊາສຳລັບວັນສະບາໂຕ ວັນຂຶ້ນໜຶ່ງຄ່ຳ ແລະ
ເທດສະການຕາມກຳນົດ ດັ່ງທີ່ບັນທຶກໄວ້ໃນພຣະບັນຍັດຂອງ ພຣະຜູ້ເປັນເຈົ້າ 4ແລະພະອົງຊົງ
ບັນຊາປະຊາຊົນຜູ້ຢູ່ໃນ ເຢຣູຊາເລັມ ໃຫ້ບໍລິຈາກສ່ວນທີ່ເປັນຂອງປະໂລຫິດ ແລະຂອງຄົນ ເລວີ
ເພື່ອພວກເຂົາເຫລົ່ານັ້ນຈະໄດ້ເຂັ້ມແຂງຂຶ້ນໃນພຣະບັນຍັດຂອງ ພຣະຜູ້ເປັນເຈົ້າ 5ເມື່ອພະບັນ-
ຊາກະຈາຍອອກໄປ ປະຊາຊົນ ອິສຣາເອນ ກໍໄດ້ບໍລິຈາກເຂົ້າມາຢ່າງຫລວງຫລາຍ ມີເຂົ້າລຸ້ນ
ທຳອິດ ນ້ຳອະງຸ່ນ ນ້ຳມັນ ນ້ຳເຜິ້ງ ແລະຜະລິດຜົນທຸກຢ່າງຂອງໄຮ່ນາ ພວກເຂົາຍັງນຳເອົາ
ໜຶ່ງສ່ວນສິບຂອງທຸກຊະນິດເຂົ້າມາຢ່າງຫລວງຫລາຍ 6ປະຊາຊົນ ອິສຣາເອນ ແລະຢູດາຜູ້ອາ-
ໄສຢູ່ໃນຫົວເມືອງຂອງ ຢູດາ ໄດ້ນຳໜຶ່ງສ່ວນສິບຂອງງົວ ແລະແກະ ໜຶ່ງສ່ວນສິບຂອງສິ່ງບໍລິ-
ສຸດທີ່ມອບຖວາຍແດ່ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງຕົນ ແລະເກັບໄວ້ເປັນ ກອງໆ 7ໃນເດືອນ
ທີສາມ ພວກເຂົາເລີ່ມກອງສູງຂຶ້ນ ແລະສຳເລັດໃນເດືອນທີເຈັດ 8ເມື່ອ ເຮເຊກີຢາ ແລະເຈົ້າ
ນາຍມາເຫັນກອງ ເຫລົ່ານັ້ນ ພວກເພິ່ນກໍຖວາຍສາທຸການແດ່ ພຣະຜູ້ເປັນເຈົ້າ ແລະອວຍພອນ
ແກ່ອິສຣາເອນ ປະຊາຊົນຂອງພຣະອົງ
9ເຮເຊກີຢາ ຊົງໄຕ່ຖາມປະໂລຫິດ ແລະຄົນ ເລວີ ເຖິງເລື່ອງກອງ ເຫລົ່ານັ້ນ 10ອາຊາຣີຢາ ປະ-
ໂລຫິດໃຫຍ່ ຜູ້ເປັນເຊື້ອສາຍຂອງ ຊາໂດກ ທູນຕອບພະອົງວ່າ “ຕັ້ງແຕ່ປະຊາຊົນໄດ້ເລີ່ມນຳ
ສ່ວນບໍລິຈາກເຂົ້າມາໃນພຣະວິຫານຂອງ ພຣະຜູ້ເປັນເຈົ້າ ພວກຂ້າພະອົງໄດ້ຮັບປະທານ ແລະ
ມີພຽງພໍຈົນເຫລືອ ຫລາຍ ເພາະ ພຣະຜູ້ເປັນເຈົ້າ ໄດ້ຊົງອຳນວຍພະພອນປະຊາຊົນຂອງພະອົງ
ຈຶ່ງ ມີເຫລືອຢູ່ຫລວງຫລາຍຢ່າງນີ້” 11ແລ້ວ ເຮເຊກີຢາ ຈຶ່ງ ຊົງ ບັນຊາ ໃຫ້ພວກ ເຂົາຈັດຫ້ອງ ໃນ
ພຣະວິຫານຂອງ ພຣະຜູ້ເປັນເຈົ້າ ແລະພວກເຂົາທັງຫລາຍກໍຈັດໄວ້ 12ພວກເຂົານຳສິ່ງບໍລິຈາກ
ເຂົ້າມາຢ່າງສັດຊື່ ທັງໜຶ່ງສ່ວນສິບ ແລະສິ່ງຂອງມອບຖວາຍທົ່ວໜ້າ ເຈົ້າໜ້າທີ່ຜູ້ເບິ່ງແຍງຄື
ໂກນານີຢາ ຄົນ ເລວີ ກັບ ຊີເມອີ ນ້ອງຊາຍເປັນຄົນຮອງ 13ເຢຮີເອນ ອາຊາຊີຢາ ນາຮາດ
ອາສາເຮນ ເຢຣີໂມດ ໂຢຊາບັດ ເອລີເອນ ອິສະມາກີຢາ ມາຮາດ ແລະ ເບນາຢາ ເປັນຜູ້
ຄວບຄຸມຊ່ວຍເຫລືອ ໂກນານີຢາ ແລະ ຊີເມອີ ນ້ອງຊາຍຂອງລາວ ໂດຍການແຕ່ງຕັ້ງຂອງກະ-
ສັດ ເຮເຊກີຢາ ແລະ ອາຊາຣີຢາ ເຈົ້າໜ້າທີ່ຊັ້ນຜູ້ໃຫຍ່ຂອງພຣະວິຫານຂອງ ພຣະເຈົ້າ
14ໂກເຣ ລູກຊາຍ ອິມນາ ຄົນ ເລວີ ຜູ້ເຝົ້າປະຕູດ້ານຕາເວັນອອກ ເປັນຜູ້ເບິ່ງແຍງຂອງບູຊາ
ທີ່ຖວາຍຕາມໃຈ ສະໝັກແດ່ ພຣະເຈົ້າ ແຈກຢາຍສ່ວນບໍລິຈາກທີ່ສະຫງວນໄວ້ສຳລັບ ພຣະຜູ້-
ເປັນເຈົ້າ ແລະສິ່ງບໍລິສຸດທີ່ສຸດ 15ເອເດັນ ມິນຢາມິນ ເຢຊູອາ ເຊມາຢາ ອາມາຣີຢາ ເຊ-

[ກ]2 ປະຫວັດກະສັດ 18:4

ກາບີອາໄດ້ຊ່ວຍພວກເຂົາໃນຕຳແໜ່ງ ໜ້າທີ່ໃນຫົວເມືອງຂອງປະໂລຫິດ ໃຫ້ແຈກຢາຍແກ່ພີ່-
ນ້ອງຂອງພວກເຂົາທັງຫລາຍ ທັງຜູ້ໃຫຍ່ ແລະຜູ້ນ້ອຍຄືກັນ ຕາມກອງເວນ [16]ເວັ້ນແຕ່ຄົນ
ເຫລົ່ານັ້ນທີ່ຂຶ້ນທະບຽນໄວ້ຕາມຜູ້ຊາຍຕັ້ງແຕ່ສາມປີຂຶ້ນໄປທຸກຄົນທີ່ເຂົ້າໄປໃນພຣະວິຫານຂອງ
ພຣະຜູ້ເປັນເຈົ້າ ເປັນຜຽນຕາມໜ້າທີ່ປະຈຳວັນທີ່ຕ້ອງເຮັດເພື່ອບົວລະບັດຕາມໜ້າ ທີ່ໂດຍກອງ
ຂອງພວກເຂົາ [17]ການຂຶ້ນທະບຽນປະໂລຫິດກໍເຮັດຕາມເຊື້ອສາຍແຫ່ງບັນພະບູລຸດຂອງພວກ
ເຂົາ ສ່ວນຄົນເລວີຕັ້ງແຕ່ອາຍຸຊາວປີຂຶ້ນໄປກໍຂຶ້ນຕາມໜ້າທີ່ຂອງພວກເຂົາ ຕາມຜຽນຂອງພວກ
ເຂົາທັງຫລາຍ [18]ແລະຂຶ້ນທະບຽນທັງລູກນ້ອຍໆຂອງຕົນ ເມຍຂອງຕົນລູກຊາຍລູກສາວຂອງ
ປວງຊົນທັງໝົດ ເພາະພວກເຂົາທັງຫລາຍສັດຊື່ໃນການຮັກສາຕົວໃຫ້ບໍລິສຸດ [19]ສຳລັບລູກ
ຫລານຂອງອາໂຣນຄືພວກປະໂລຫິດ ຜູ້ຢູ່ໃນທົ່ງນາອ້ອມຮອບຫົວເມືອງຂອງພວກເຂົານັ້ນ ມີຜູ້
ຊາຍໃນຫົວເມືອງຕ່າງໆ ຜູ້ຖືກລະບຸຊື່ໃຫ້ແຈກຢາຍສ່ວນແບ່ງແກ່ຜູ້ຊາຍທຸກຄົນໃນພວກປະໂລ-
ຫິດ ແລະທຸກຄົນໃນພວກເລວີຜູ້ທີ່ໄດ້ຂຶ້ນທະບຽນໄວ້

[20]ເຮເຊກີຢາຊົງກະທຳດັ່ງນີ້ທົ່ວທັງຢູດາ ພະອົງຊົງກະທຳສິ່ງທີ່ດີ ແລະຊອບ ເປັນຄວາມຈິງ
ຕໍ່ພຣະພັກພຣະຜູ້ເປັນເຈົ້າ ພຣະເຈົ້າຂອງພະອົງ [21]ວຽກງານທຸກຢ່າງທີ່ພະອົງຊົງເລີ່ມເຮັດໃນ
ການບົວລະບັດພຣະວິຫານຂອງພຣະເຈົ້າ ແລະຕາມກົດໝາຍຕາມພຣະບັນຍັດເພື່ອສະແຫວງ-
ຫາພຣະເຈົ້າຂອງພະອົງ ພະອົງຊົງກະທຳດ້ວຍເຕັມພະໄທ ແລະຊົງຈະເລີນຂຶ້ນ

# ບົດທີ 32

## ການຟື້ນຟູໃໝ່ເພີ່ມຂຶ້ນໃນລາຊະການຂອງເຮເຊກີຢາ

[1]ພາຍຫລັງເຫດການເຫລົ່ານີ້ ແລະການສະຖາປະນາຂຶ້ນນັ້ນ ເສັນນາເກຣິບກະສັດອັດຊີເຣຍ
ຍົກທັບມາບຸກລຸກຢູດາ ແລະຕັ້ງຄ້າຍອ້ອມຫົວເມືອງທີ່ມີປ້ອມໄວ້ ຊົງກ່າວວ່າຈະຍຶດໄວ້ [2]ແລະ
ເມື່ອ ເຮເຊກີຢາ ຊົງ ເຫັນ ວ່າ ເສັນນາເກຣິບ ຍົກ ທັບ ມາ ດ້ວຍ ເຈດຕະນາ ຈະ ຕໍ່ສູ້ ກັບ ເຢຣູຊາເລັມ
[3]ພະອົງຊົງວາງແຜນການກັບເຈົ້ານາຍຂອງພະອົງ ແລະທະຫານຜູ້ເກັ່ງກ້າຂອງພະອົງ ທີ່ຈະອັດ
ນ້ຳຕາມນ້ຳພຸທີ່ຢູ່ນອກເມືອງເສຍ ແລະພວກເຂົາທັງຫລາຍກໍຊົງຊ່ວຍພະອົງ [4]ມີປະຊາຊົນເປັນ
ຈຳນວນຫລາຍຮອບຮວມກັນເຂົ້າມາ ແລະອັດນ້ຳພຸ ປິດລຳທານທີ່ໄຫລຜ່ານແຜ່ນດິນເສຍ ໂດຍ
ເວົ້າວ່າ "ເປັນຫຍັງຈະໃຫ້ບັນດາກະສັດອັດຊີເຣຍຍົກທັບມາພົບນ້ຳເປັນຈຳນວນຫລາຍ" [5]ພະອົງ
ຊົງປະກອບກິດຈະການຢ່າງບຶກບືນ ສ້າງກຳແພງທີ່ເພພັງຂຶ້ນໃໝ່ ແລະສ້າງຫໍຄອຍຂຶ້ນ ແລະ
ຊົງສ້າງກຳແພງຂ້າງນອກອີກຊັ້ນໜຶ່ງ ພະອົງຊົງເສີມກຳແພງປ້ອມມິນໂລທີ່ນະຄອນດາວິດຊົງ
ສ້າງຫອກ ແລະໂລ່ເປັນຈຳນວນຫລາຍ

[6]ພະອົງຊົງຕັ້ງຜູ້ບັງຄັບການຕໍ່ຕ້ານໄວ້ເໜືອປະຊາຊົນ ແລະຊົງຮອບຮວມເຂົ້າໄວ້ນຳກັນໃນ
ຖະໜົນທີ່ປະຕູເມືອງ ແລະກ່າວໜູນໃຈພວກເຂົາທັງຫລາຍວ່າ [7]"ຈົ່ງເຂັ້ມແຂງ ແລະກ້າຫານ
ເຖີດ ຢ່າຢ້ານ ຫລືທໍ້ຖອຍຕໍ່ກະສັດອັດຊີເຣຍ ແລະຕໍ່ກອງທັບທັງໝົດທີ່ຢູ່ກັບພວກເຂົານັ້ນ
ເພາະມີຜູ້ໜຶ່ງໃນຝ່າຍເຮົາທີ່ໃຫຍ່ກວ່າຝ່າຍພວກເຂົາ [8]ຝ່າຍພວກເຂົາມີແຕ່ກຳລັງເນື້ອໜັງ ແຕ່
ຝ່າຍເຮົາມີພຣະຜູ້ເປັນເຈົ້າພຣະເຈົ້າຂອງເຮົາຊົງສະຖິດກັບເຮົາ ທີ່ຊົງຊ່ວຍເຮົາ ແລະສູ້ຮົບກັບ

ຝ່າຍເຮົາ” ປະຊາຊົນກໍວາງໃຈໃນພຣະດຳລັດຂອງ ເຮເຊກີຢາກະສັດແຫ່ງຢູດາ

## ເຊັນນາເກຣິບມາບຸກລຸກຢູດາ[ກ]

[9]ພາຍຫລັງ ເຊັນນາເກຣິບ ກະສັດແຫ່ງ ອັດຊີເຣຍ (ຜູ້ທີ່ກຳລັງອ້ອມເມືອງ ລາກິດ ຢູ່ດ້ວຍກຳລັງ
ຮົບທັງໝົດຂອງພະອົງ) ໄດ້ຮັບສັ່ງໃຫ້ຂ້າລາຊະການຂອງພະອົງໄປເມືອງ ເຢຣູຊາເລັມ ເຖິງ ເຮ-
ເຊກີຢາ ກະສັດ ຂອງ ຢູດາ ແລະ ເຖິງ ປະຊາຊົນ ທັງ ປວງ ຂອງ ຢູດາ ທີ່ຢູ່ ໃນ ເຢຣູຊາເລັມ ວ່າ
[10]“ເຊັນນາເກຣິບ ກະສັດແຫ່ງ ອັດຊີເຣຍກ່າວດັ່ງນີ້ວ່າ ‘ເຈົ້າທັງຫລາຍເພິ່ງຫຍັງ ເຈົ້າຈຶ່ງຢືນໝັ້ນ
ອ້ອມຢູ່ໃນເມືອງ ເຢຣູຊາເລັມ [11]ເຮເຊກີຢາບໍ່ໄດ້ພາເຈົ້າໃຫ້ຫລົງ ເພື່ອຈະມອບເຈົ້າໃຫ້ຕາຍດ້ວຍ
ການອຶດອາຫານ ແລະຄວາມກະຫາຍຫລື ໃນເມື່ອລາວບອກເຈົ້າວ່າ “ພຣະຜູ້ເປັນເຈົ້າພຣະເຈົ້າ
ຂອງເຮົາຈະຊົງຊ່ອຍເຮົາໃຫ້ພົ້ນຈາກມືຂອງກະສັດແຫ່ງ ອັດຊີເຣຍ” [12]ເຮເຊກີຢາຄົນນີ້ແຫລະ ບໍ່
ແມ່ນຫລື ທີ່ໄດ້ກຳຈັດປູຊະນີຍະສະຖານສູງ ແລະແທ່ນບູຊາຂອງພະອົງ ແລະ ບັນຊາແກ່ຢູດາ
ກັບ ເຢຣູຊາເລັມ ວ່າ “ເຈົ້າຈົ່ງນະມັດສະການຢູ່ໜ້າແທ່ນບູຊາແທ່ນດຽວ ແລະເຈົ້າຈົ່ງ ເຜົາເຄື່ອງ
ຫອມເທິງແທ່ນນັ້ນ” [13]ເຈົ້າບໍ່ຮູ້ຫລືວ່າ ເຮົາ ແລະບັນພະບູລຸດຂອງເຮົາໄດ້ເຮັດຫຍັງແກ່ຊົນຊາດ
ທັງຫລາຍ ແຫ່ງປະເທດຕ່າງໆ ພະຂອງບັນດາປະຊາຊາດ ແຫ່ງປະເທດ ເຫລົ່ານັ້ນສາມາດຊ່ອຍ
ປະເທດຂອງພວກເຂົາໃຫ້ພົ້ນຈາກມືຂອງເຮົາໄດ້ບໍ? [14]ໃນພວກພະທັງປວງ ແຫ່ງປະຊາຊາດ
ເຫລົ່ານັ້ນທີ່ບັນພະບູລຸດຂອງເຮົາໄດ້ທຳລາຍເສຍຈົນໝົດສິ້ນ ຍັງມີພະອົງໃດແດ່ທີ່ສາມາດຊ່ອຍ
ປະຊາຊົນຂອງຕົນໃຫ້ພົ້ນຈາກມືຂອງເຮົາ ແລ້ວ ພຣະເຈົ້າ ຂອງເຈົ້ານັ້ນຫລືຈະສາມາດຊ່ອຍເຈົ້າ
ໃຫ້ພົ້ນຈາກມືຂອງເຮົາ [15]ເພາະສະນັ້ນ ບັດນີ້ຢ່າໃຫ້ ເຮເຊກີຢາຫລອກລວງເຈົ້າ ຫລືພາເຈົ້າໃຫ້
ຫລົງໃນທຳນອງນີ້ ຢ່າເຊື່ອລາວ ເພາະບໍ່ມີພະແຫ່ງປະຊາຊາດ ຫລືລາຊະອານາຈັກໃດທີ່ສາ-
ມາດຊ່ອຍປະຊາຊົນຂອງຕົນໃຫ້ພົ້ນຈາກມືຂອງເຮົາ ຫລືຈາກມືບັນພະບູລຸດຂອງເຮົາ ພຣະເຈົ້າ
ຂອງເຈົ້າຈະຊ່ອຍເຈົ້າໃຫ້ພົ້ນຈາກມືຂອງເຮົາໄດ້ຫລາຍກວ່ານັ້ນຈັກເທົ່າໃດ’”

[16]ແລະຂ້າລາຊະການຂອງພະອົງກໍກ່າວທັບຖົມ ພຣະຜູ້ເປັນເຈົ້າ ແລະ ເຮເຊກີຢາຜູ້ຮັບໃຊ້
ຂອງພຣະອົງຫລາຍກວ່ານັ້ນ

## ການຂູ່ເຂັນຢ່າງໜັກຂອງເຊັນນາເກຣິບ[ຂ]

[17]ແລະພະອົງຊົງຂຽນໜັງສືໝິ່ນປະໝາດ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງ ອິສຣາເອນ ແລະ
ກ່າວທັບຖົມພຣະອົງວ່າ “ພະຂອງບັນດາປະຊາຊາດແຫ່ງປະເທດທັງຫລາຍບໍ່ໄດ້ຊ່ອຍປະຊາຊົນ
ຂອງຕົນໃຫ້ພົ້ນຈາກມືຂອງເຮົາສັນໃດ ພຣະເຈົ້າ ຂອງ ເຮເຊກີຢາກໍຈະບໍ່ຊ່ອຍປະຊາຊົນຂອງຕົນ
ໃຫ້ພົ້ນຈາກມືຂອງເຮົາສັນນັ້ນ” [18]ພວກເຂົາທັງຫລາຍກໍຮ້ອງຄວາມນີ້ດ້ວຍສຽງອັນດັ່ງເປັນພາສາ
ເຮັບເຣີໃຫ້ຊາວ ເຢຣູຊາເລັມຜູ້ຢູ່ເທິງກຳແພງຟັງ ເພື່ອໃຫ້ພວກເຂົາຕົກໃຈ ແລະຫວັ່ນໄຫວ ແລ້ວ
ຈະໄດ້ຍຶດ ເອົາເມືອງນັ້ນ [19]ພວກເຂົາໄດ້ເວົ້າເຖິງ ພຣະເຈົ້າ ແຫ່ງ ເຢຣູຊາເລັມ ຄືກັບທີ່ພວກເຂົາ
ເວົ້າເຖິງພະແຫ່ງຊົນຊາດທັງຫລາຍຂອງແຜ່ນດິນໂລກ ຊຶ່ງເປັນຜົນງານຂອງມືມະນຸດ

[20]ແລ້ວກະສັດ ເຮເຊກີຢາ ແລະຜູ້ທຳນວາຍ ເອຊາຢາ ລູກຊາຍ ອາໂມດ ໄດ້ອະທິຖານ ເພາະ

---

[ກ]2 ປະຫວັດກະສັດ 18:13-19:37; ເອຊາຢາ 36:1-22
[ຂ]2 ປະຫວັດກະສັດ 18:17-25 [ຂ]2 ພະກົດ 19:9-13

ເລື່ອງນີ້ ໂດຍຮ້ອງທູນຕໍ່ສະຫວັນ [21]ແລະ ພຣະຜູ້ເປັນເຈົ້າ ຊົງໃຊ້ຜູ້ສົ່ງຂ່າວສະຫວັນອົງໜຶ່ງ ຊຶ່ງ
ໄດ້ຕັດທະຫານກ້າທັງປວງ ຜູ້ບັງຄັບກອງທັບ ແລະນາຍທະຫານໃນຄ້າຍຂອງກະສັດແຫ່ງ ອັດ-
ຊີເຣຍ ອອກເສຍ ເພາະສະນັ້ນ ພະອົງຈຶ່ງສະເດັດກັບໄປໃນແຜ່ນດິນຂອງພະອົງດ້ວຍຄວາມ
ອັບອາຍຂາຍໜ້າ ແລະເມື່ອພະອົງສະເດັດເຂົ້າໃນວິຫານແຫ່ງພະຂອງພະອົງ ຜູ້ທີ່ອອກມາຈາກ
ບັ້ນແອວຂອງພະອົງເອງໄດ້ຂ້າພະອົງດ້ວຍດາບ [22]ດັ່ງນັ້ນ ພຣະຜູ້ເປັນເຈົ້າ ຈຶ່ງຊົງຊ່ອຍ ເຮເຊກີ-
ຢາ ແລະຊາວ ເຢຣູຊາເລັມ ໃຫ້ພົ້ນຈາກພະຫັດຂອງ ເສັນນາເກຣິບ ກະສັດຂອງ ອັດຊີເຣຍ ແລະ
ຈາກມືຂອງສັດຕູທັງໝົດຂອງພະອົງ ແລະພະອົງຊົງນຳພວກເຂົາທັງຫລາຍຢູ່ທຸກດ້ານ [23]ຄົນ
ເປັນ ຈຳນວນ ຫລາຍ ນຳ ເຄື່ອງ ຖວາຍ ພຣະຜູ້ເປັນເຈົ້າ ມາ ໃນ ເຢຣູຊາເລັມ ແລະ ສິ່ງ ປະເສີດ
ຕ່າງໆມາຖວາຍ ເຮເຊກີຢາ ກະສັດແຫ່ງ ຢູດາ ພະອົງຈຶ່ງຊົງເປັນທີ່ຍົກຍ້ອງໃນສາຍຕາຂອງປະ-
ຊາຊາດທັງປວງຕັ້ງແຕ່ເວລານັ້ນເປັນຕົ້ນມາ

## ເສັນນາເກຣິບໝິ່ນປະໝາດພຣະເຈົ້າຂອງເຮເຊກີຢາ[ຂ]

[24]ຄັ້ງນັ້ນ ເຮເຊກີຢາ ຊົງເຈັບປ່ວຍໃກ້ຈະສິ້ນພະຊົນ ແລະພະອົງທູນອະທິຖານຕໍ່ ພຣະຜູ້ເປັນ-
ເຈົ້າ ແລະ ພຣະຜູ້ເປັນເຈົ້າ ຊົງຕອບ ແລະປະທານໝາຍສຳຄັນຢ່າງໜຶ່ງໃຫ້ແກ່ ເຮເຊກີຢາ [25]ແຕ່
ເຮເຊກີຢາບໍ່ໄດ້ສະໜອງພຣະຄຸນນັ້ນ ເພາະພະໄທຂອງພະອົງຈອງຫອງຂຶ້ນ ພຣະພິໂລດຈຶ່ງມາ
ເໜືອພະອົງ ຢູດາ ແລະ ເຢຣູຊາເລັມ [26]ເຮເຊກີຢາ ຊົງອ່ອນນ້ອມຖ່ອມພະໄທທີ່ແຮງນັ້ນລົງ ທັງ
ພະອົງ ແລະຊາວ ເຢຣູຊາເລັມ ພຣະພິໂລດຂອງ ພຣະຜູ້ເປັນເຈົ້າ ຈຶ່ງບໍ່ໄດ້ມາເໜືອພວກເຂົາທັງ-
ຫລາຍໃນລາຊະການຂອງ ເຮເຊກີຢາ

[27]ເຮເຊກີຢາ ຊົງມີລາຊະສົມບັດ ແລະກຽດຍິ່ງໃຫຍ່ ພະອົງຊົງສ້າງຄັງໄວ້ສຳລັບພະອົງ ເພື່ອ
ເກັບເງິນ ຄຳ ແລະເພັດພອຍຕ່າງໆ ເຄື່ອງເທດ ໂລ່ ແລະສຳລັບຊັບສິນທີ່ມີຄ່າທຸກຊະນິດ
[28]ທັງສາງສຳລັບເຂົ້າ ນ້ຳອະງຸ່ນ ແລະນ້ຳມັນ ທີ່ຜະລິດມາ ແລະໂຮງມ້ຽນສັດລ້ຽງທຸກຊະນິດກັບ
ຄອກແກະ [29]ພະອົງຊົງຈັດຫົວເມືອງເພື່ອພະອົງດ້ວຍ ທັງຝູງແບ້ແກະ ແລະຝູງງົວເປັນຈຳນວນ
ຫລາຍ ເພາະ ພຣະເຈົ້າ ຊົງປະທານຊັບສິນໃຫ້ພະອົງຫລວງຫລາຍ

[30]ເຮເຊກີຢາ ອົງນີ້ເອງຊົງປິດທາງນ້ຳອອກຕອນເທິງຂອງນ້ຳພຸກີໂຮນ ເສຍ ແລ້ວເຮັດໃຫ້ໄຫລ
ລົງໄປທາງທິດຕາເວັນຕົກຂອງນະຄອນ ດາວິດ ແລະ ເຮເຊກີຢາ ຊົງຈະເລີນໃນພະລາຊະກິດທັງ
ໝົດຂອງພະອົງ [31]ຢ່າງໃດກໍຕາມ ໃນເລື່ອງຜູ້ສົ່ງຂ່າວທີ່ເຈົ້ານາຍເມືອງ ບາບີໂລນ ໃຊ້ໃຫ້ມາຖາມ
ເຖິງການມະຫັດສະຈັນທີ່ໄດ້ເກີດຂຶ້ນໃນແຜ່ນດິນ ພຣະເຈົ້າ ກໍຊົງປ່ອຍພະອົງຕາມໃຈ ເພື່ອຈະ
ທົດລອງພະອົງ ແລະເພື່ອຈະຮູ້ຄຳກ່າວທັງໝົດໃນພະໄທຂອງພະອົງ

[32]ຝ່າຍພະລາຊະກິດນອກນັ້ນຂອງ ເຮເຊກີຢາ ແລະຄວາມດີຂອງພະອົງ ກໍມີບັນທຶກໄວ້ໃນ
ນິມິດຂອງ ເອຊາຢາ ຜູ້ທຳນວາຍລູກຊາຍ ອາໂມດ ແລະໃນໜັງສືຂອງກະສັດແຫ່ງ ຢູດາ ແລະ ອິ-
ສຣາເອນ

## ເຮເຊກີຢາຊົງປະຊວນ ແລະຊົງກັບຄືນ[ກ]

[33]ເຮເຊກີຢາ ລ່ວງລັບໄປຢູ່ກັບບັນພະບູລຸດຂອງພະອົງ ພວກເຂົາຝັງພະສົບໄວ້ໃນຂຸມຝັງສົບ

[ກ]2 ປະຫວັດກະສັດ 20:1-11 [ຂ]2 ປະຫວັດກະສັດ 20:20-21

ສຳຄັນທີ່ສຸດໃນບັນດາລູກຊາຍຂອງ ດາວິດ. ຄົນຢູດາ ແລະຊາວ ເຢຣູຊາເລັມ ທັງປວງໄດ້ຖວາຍ
ກຽດ ເມື່ອພະອົງສິ້ນພະຊົນ ແລະ ມານາເຊ ລູກຊາຍຂອງພະອົງໄດ້ປົກຄອງແທນພະອົງ

# ບົດທີ 33

## ການສິ້ນພະຊົນຂອງເຮເຊກີຢາ[ຂ]

[1]ເມື່ອ ມານາເຊ ເລີ່ມປົກຄອງ ພະອົງມີອາຍຸສິບສອງປີ ແລະຊົງປົກຄອງໃນ ເຢຣູຊາເລັມ ຫ້າ
ສິບຫ້າປີ [2]ພະອົງຊົງກະທຳສິ່ງທີ່ຊົ່ວຮ້າຍໃນສາຍພຣະເນດຂອງ ພຣະຜູ້ເປັນເຈົ້າ ຕາມການເຮັດ
ທີ່ໜ້າກຽດຊັງ ແຫ່ງປະຊາຊາດ ຊຶ່ງ ພຣະຜູ້ເປັນເຈົ້າ ຊົງຂັບໄລ່ໄປເສຍຈາກປະຊາຊົນ ອິສຣາເອນ
[3]ເພາະພະອົງຊົງສ້າງປູຊະນີຍະສະຖານສູງຂຶ້ນໃໝ່ ຊຶ່ງ ເຮເຊກີຢາ ພໍ່ຂອງພະອົງໄດ້ຊົງທຳລາຍ
ນັ້ນ ແລະຊົງສ້າງ ແທ່ນບູຊາແກ່ ພະບາອານ ຊົງເຮັດບັນດາເສົາຮູບເຄົາລົບ ຊົງນະມັດສະການ
ບໍລິວານທັງໝົດຂອງຟ້າສະຫວັນ ແລະບົວລະບັດພະ ເຫລົ່ານັ້ນ [4]ພະອົງຊົງສ້າງ ແທ່ນບູຊາໃນ
ພຣະວິຫານຂອງ ພຣະຜູ້ເປັນເຈົ້າ ຊຶ່ງ ພຣະຜູ້ເປັນເຈົ້າ ກ່າວວ່າ “ນາມຂອງເຮົາຈະຢູ່ໃນ ເຢຣູຊາ-
ເລັມ ຕະຫລອດໄປເປັນນິດ” [5]ແລະໄດ້ຊົງສ້າງ ແທ່ນບູຊາສຳລັບບັນດາບໍລິວານ ແຫ່ງຟ້າສະຫວັນ
ໃນ ເດີ່ນທັງສອງ ແຫ່ງພຣະວິຫານຂອງ ພຣະຜູ້ເປັນເຈົ້າ [6]ພະອົງ ໄດ້ຊົງຖວາຍລູກຊາຍຂອງພະ
ອົງໃຫ້ລຸຍໄຟໃນພູເຂົາ ລູກຊາຍຂອງຮິນໂນມ ຖືເລີກຍາມ ເວດມົນ ຄາຖາ ແລະຕິດຕໍ່ກັບຄົນ
ຊົງ ພໍ່ມົດແມ່ມົດ ໝໍຜີ ພະອົງຊົງກະທຳສິ່ງທີ່ຊົ່ວຮ້າຍເປັນຈຳນວນຫລາຍໃນສາຍພຣະເນດຂອງ
ພຣະຜູ້ເປັນເຈົ້າ ແລະເຮັດໃຫ້ພຣະອົງຊົງພຣະພິໂລດ [7]ຮູບເຄົາລົບສະຫລັກ ຄືຮູບເຄົາລົບທີ່ພະ
ອົງຊົງສ້າງນັ້ນ ພະອົງຊົງຕັ້ງໄວ້ໃນພຣະວິຫານຂອງ ພຣະເຈົ້າ ຊຶ່ງ ພຣະເຈົ້າ ກ່າວກັບ ດາວິດ
ແລະ ໂຊໂລໂມນ ລູກຊາຍຂອງ ດາວິດ ວ່າ “ໃນວິຫານນີ້ແລະໃນ ເຢຣູຊາເລັມ ຊຶ່ງເຮົາໄດ້ເລືອກ
ອອກຈາກຕະກູນທັງໝົດຂອງ ອິສຣາເອນ ເຮົາຈະບັນຈຸນາມຂອງເຮົາໄວ້ເປັນນິດ [8]ແລະເຮົາຈະ
ບໍ່ ໃຫ້ ຕີນ ຂອງ ອິສຣາເອນ ພະເນຈອນ ອອກ ໄປ ຈາກ ແຜ່ນດິນ ຊຶ່ງ ເຮົາ ໄດ້ ກຳນົດ ໃຫ້ ບັນພະບູລຸດ
ຂອງເຈົ້າອີກເລີຍ ຖ້າພວກເຂົາພຽງແຕ່ລະມັດລະວັງ ເຮັດທຸກຢ່າງທີ່ເຮົາໄດ້ບັນຊາພວກເຂົາໄວ້
ຄືກົດໝາຍ ກົດເກນ ແລະກົດທັງໝົດທີ່ໄດ້ໃຫ້ໄວ້ໂດຍທາງ ໂມເຊ” [9]ມານາເຊ ຊົງຊັກຈູງ ຢູດາ
ແລະຊາວ ເຢຣູຊາເລັມ ໃຫ້ຫລົງໄປ ພວກເຂົາຈຶ່ງເຮັດຄວາມຊົ່ວຮ້າຍຫລາຍກວ່າບັນດາປະຊາ-
ຊາດ ຊຶ່ງ ພຣະຜູ້ເປັນເຈົ້າ ໄດ້ຊົງທຳລາຍໃຫ້ພົ້ນຈາກໜ້າປະຊາຊົນ ອິສຣາເອນ ນັ້ນ
[10]ພຣະຜູ້ເປັນເຈົ້າ ກ່າວກັບ ມານາເຊ ແລະປະຊາຊົນຂອງພະອົງ ແຕ່ພວກເຂົາທັງຫລາຍບໍ່
ຟັງ

## ມານາເຊປົກຄອງເໜືອຢູດາ[ກ]

[11]ເພາະສະນັ້ນ ພຣະຜູ້ເປັນເຈົ້າ ຊົງໃຫ້ຜູ້ບັງຄັບກອງທະຫານຂອງກະສັດ ແຫ່ງ ອັດຊີເຣຍ ມາ
ຕໍ່ສູ້ພວກເຂົາ ໂດຍເອົາເບັດເກາະ ມານາເຊ ແລະຈຳຈອງດ້ວຍໂສ້ ແລ້ວນຳພະອົງມາ ບາບີໂລນ
[12]ເມື່ອພະອົງຊົງທຸກຍາກ ພະອົງຊົງອ້ອນວອນຂໍພະກະລຸນາຕໍ່ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງ
ພະອົງ ຊົງຖ່ອມພະໄທລົງຢ່າງຫລາຍຕໍ່ພຣະພັກ ພຣະເຈົ້າ ຂອງບັນພະບູລຸດຂອງພະອົງ [13]ພະ

---

[ກ]2 ປະຫວັດກະສັດ 21:29

ອົງຊົງອະທິຖານຕໍ່ ພຣະເຈົ້າ ແລະ ພຣະເຈົ້າ ຊົງຟັງຄຳອ້ອນວອນຂອງພະອົງ ໂດຍນຳພະອົງ
ກັບມາ ເມືອງ ເຢຣູຊາເລັມ ໃນລາຊະອານາຈັກຂອງພະອົງອີກ ແລ້ວ ມານາເຊ ຊົງຮູ້ວ່າ ພຣະຜູ້-
ເປັນເຈົ້າ ຊົງ ເປັນ ພຣະເຈົ້າ
14ພາຍຫລັງ ພະອົງຊົງສ້າງກຳແພງຊັ້ນນອກໃຫ້ນະຄອນ ດາວິດ ທາງຕາເວັນຕົກຂອງ ກີໂຮນ
ໃນພູເຂົາໄປ ຈົນຮອດທາງເຂົ້າປະຕູປາ ແລ້ວອ້ອມຮອບ ໂອເຟນ ແລະກໍ່ຂຶ້ນໃຫ້ສູງ ແລະພະ
ອົງຊົງຕັ້ງຜູ້ບັງຄັບບັນຊາກອງທັບໃຫ້ຢູ່ໃນຫົວເມືອງມີປ້ອມໃນ ຢູດາ ທັງໝົດ
15ພະອົງຊົງ ເອົາພະຕ່າງດ້າວ ແລະຮູບ ເຄົາລົບ ໄປເສຍຈາກພຣະວິຫານຂອງ ພຣະຜູ້ເປັນເຈົ້າ
ແລະ ແທ່ນ ບູຊາທັງໝົດທີ່ພະອົງໄດ້ຊົງສ້າງໄວ້ເທິງພູເຂົາແຫ່ງພຣະວິຫານຂອງ ພຣະຜູ້ເປັນເຈົ້າ
ແລະໃນ ເຢຣູຊາເລັມ ພະອົງຊົງຖິ້ມອອກໄປນອກເມືອງ 16ພະອົງຊົງສ້ອມແປງແທ່ນບູຊາຂອງ
ພຣະຜູ້ເປັນເຈົ້າ ແລະຊົງຖວາຍ ເຄື່ອງສັດບູຊາ ເປັນ ເຄື່ອງບູຊາ ເພື່ອຄວາມສາມັກຄີທຳ ແລະ
ເຄື່ອງ ໂມທະນາພຣະຄຸນ ເທິງ ແທ່ນ ນັ້ນ ພະ ອົງ ຊົງ ບັນຊາ ໃຫ້ ຢູດາ ບົວລະບັດ ພຣະຜູ້ເປັນເຈົ້າ
ພຣະເຈົ້າ ແຫ່ງ ອິສຣາເອນ 17ເຖິງປານນັ້ນກໍດີ ປະຊາຊົນກໍຍັງຖວາຍສັດບູຊາທີ່ປູຊະນີຍະສະ-
ຖານສູງ ແຕ່ຖວາຍຕໍ່ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງພວກເຂົາເທົ່ານັ້ນ
18ສ່ວນ ພະ ລາຊະ ກິດ ນອກ ນັ້ນ ຂອງ ມານາເຊ ແລະ ຄຳ ອະທິຖານ ຂອງ ພະ ອົງ ຕໍ່ ພຣະເຈົ້າ
ແລະຖ້ອຍຄຳຂອງຜູ້ທຳນວາຍ ຜູ້ທູນພະອົງໃນພຣະນາມຂອງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ແຫ່ງ ອິ-
ສຣາເອນ ກໍມີບັນທຶກໄວ້ໃນໜັງສືຂອງກະສັດ ແຫ່ງ ອິສຣາເອນ 19ຄຳອະທິຖານຂອງພະອົງ
ແລະ ເລື່ອງທີ່ ພຣະເຈົ້າ ຊົງຮັບຄຳອ້ອນວອນຂອງພະອົງ ບາບທັງໝົດຂອງພະອົງ ແລະການບໍ່
ສັດຊື່ຂອງພະອົງ ສະຖານທີ່ຊຶ່ງພະອົງຊົງສ້າງປູຊະນີຍະສະຖານສູງ ແລະຕັ້ງບັນດາ ເສົາຮູບ
ເຄົາລົບ ກັບຮູບ ເຄົາລົບສະຫລັກ ກ່ອນທີ່ພະອົງຊົງຖ່ອມພະອົງລົງນັ້ນ ພວກເຂົາບັນທຶກໄວ້ໃນ
ໜັງສືປະຫວັດທີ່ຜູ້ທຳນວາຍຊຽນ 20ມານາເຊ ຈຶ່ງຊົງລ່ວງລັບໄປຢູ່ກັບບັນພະບູລຸດຂອງພະອົງ
ພວກ ເຂົາຝັງພະສົບໄວ້ໃນພະລາຊະວັງຂອງພະອົງ ແລະ ອາໂມນ ລູກຊາຍຂອງພະອົງໄດ້ປົກ-
ຄອງ ແທນພະອົງ

## ມານາເຊຕົກເປັນຊະເລີຍ ແລ້ວກັບຄືນມາ

21ເມື່ອ ອາໂມນ ເລີ່ມປົກຄອງ ພະອົງມີອາຍຸຊາວສອງປີ ແລະຊົງປົກຄອງໃນ ເຢຣູຊາເລັມ
ສອງປີ 22ພະອົງຊົງກະທຳຄວາມຊົ່ວຮ້າຍໃນສາຍພຣະເນດຂອງ ພຣະຜູ້ເປັນເຈົ້າ ແບບ ມານາ-
ເຊ ບິດາຂອງພະອົງຊົງກະທຳນັ້ນ ອາໂມນ ຖວາຍສັດບູຊາ ແກ່ຮູບ ເຄົາລົບສະຫລັກທັງໝົດທີ່
ມານາເຊພໍ່ຂອງພະອົງໄດ້ຊົງສ້າງຂຶ້ນ ແລະຊົງບົວລະບັດຮູບ ເຄົາລົບນັ້ນ 23ພະອົງບໍ່ໄດ້ຖ່ອມພະ
ອົງລົງຕໍ່ພຣະພັກ ພຣະຜູ້ເປັນເຈົ້າ ຄື ມານາເຊ ບິດາຂອງພະອົງໄດ້ຖ່ອມລົງນັ້ນ ແຕ່ ອາໂມນ
ອົງນີ້ໄດ້ກໍ່ກຳຫລາຍຂຶ້ນ

## ອາໂມນປົກຄອງເໜືອຢູດາ[ກ]

24ແລ້ວຂ້າລາຊະການຂອງພະອົງກໍຮ່ວມກັນຄິດກະບົດຕໍ່ພະອົງ ໂດຍໄດ້ຂ້າພະອົງເສຍໃນ
ພະລາຊະວັງ ຂອງພະ ອົງ 25ແຕ່ປະຊາຊົນ ແຫ່ງ ແຜ່ນດິນ ໄດ້ປະຫານບັນດາຄົນ ເຫລົ່ານັ້ນທີ່ຄິດ

[ກ]2 ປະຫວັດກະສັດ 21:18-22 [ຂ]2 ປະຫວັດກະສັດ 21:23-26

ກະບົດຕໍ່ກະສັດ ອາໂມນ ແລະປະຊາຊົນແຫ່ງແຜ່ນດິນໄດ້ແຕ່ງຕັ້ງໃຫ້ໂຢສິຢາລູກຊາຍຂອງພະ
ອົງຂຶ້ນປົກຄອງແທນພະອົງ

# ບົດທີ 34

## ການສິ້ນພະຊົນຂອງອາໂມນ[ຂ]

[1]ເມື່ອ ໂຢສິຢາ ເລີ່ມປົກຄອງ ພະອົງມີອາຍຸແປດປີ ແລະຊົງປົກຄອງໃນ ເຢຣູຊາເລັມ ສາມສິບ
ເອັດປີ [2]ພະອົງຊົງກະທຳສິ່ງທີ່ພໍພຣະໄທໃນສາຍພຣະເນດຂອງ ພຣະຜູ້ເປັນເຈົ້າ ແລະດຳເນີນ
ໃນເສັ້ນທາງຂອງ ດາວິດ ບັນພະບູລຸດຂອງພະອົງ ແລະບໍ່ໄດ້ຊົງຫັນໄປທາງຂວາ ຫລືທາງຊ້າຍ
[3]ເພາະໃນປີທີແປດແຫ່ງລາຊະການຂອງພະອົງ ເມື່ອພະອົງຍັງຊົງເປັນເດັກນ້ອຍຢູ່ ພະອົງ
ຊົງເລີ່ມສະແຫວງຫາ ພຣະເຈົ້າ ຂອງ ດາວິດ ບັນພະບູລຸດຂອງພະອົງ ແລະໃນປີທີສິບສອງ ພະ
ອົງຊົງເລີ່ມກວາດລ້າງ ຢູດາ ແລະ ເຢຣູຊາເລັມ ດ້ວຍການກຳຈັດປູຊະນີຍະສະຖານສູງ ທັງບັນ-
ດາເສົາຮູບເຄົາລົບ ແລະຮູບເຄົາລົບແກະສະຫລັກກັບຮູບເຄົາລົບຫລໍ່ [4]ພວກເຂົາທຳລາຍແທ່ນ
ບູຊາ ພະບາອານ ລົງຕໍ່ພະພັກຂອງພະອົງ ພະອົງຊົງລົ້ມບັນດາຮູບເຄົາລົບ ທີ່ຕັ້ງຢູ່ເທິງນັ້ນລົງ
ແລະພຣະອົງຊົງທຸບບັນດາເສົາຮູບເຄົາລົບ ແລະຮູບເຄົາລົບແກະສະຫລັກກັບຮູບເຄົາລົບ ຫລໍ່
ເປັນທ່ອນໆ ແລະຊົງກະທຳໃຫ້ເປັນຝຸ່ນໂຮຍເທິງຂຸມສົບຂອງບັນດາຄົນທີ່ຖວາຍສັດບູຊາແກ່ພະ
ເຫລົ່ານັ້ນ [5]ພະອົງຊົງເຜົາກະດູກຂອງປະໂລຫິດເທິງແທ່ນພະເຫລົ່ານັ້ນ ແລະຊົງກວາດລ້າງຢູ-
ດາ ກັບ ເຢຣູຊາເລັມ [6]ພະອົງຊົງກະທຳເຊັ່ນກັນໃນຫົວເມືອງຂອງ ມານາເຊ ເອຟຣາຢິມ ແລະ
ຊີເມໂອນ ໄປຮອດ ນັບທາລີ [7]ເມື່ອພະອົງຊົງທຳລາຍແທ່ນບູຊາ ແລະບັນດາເສົາຮູບເຄົາລົບ
ແລະຊົງທຸບຮູບເຄົາລົບສະຫລັກໃຫ້ເປັນຝຸ່ນ ຊົງລົ້ມບັນດາຮູບເຄົາລົບທັງໝົດລົງທົ່ວແຜ່ນດິນອິ-
ສຣາເອນ ແລ້ວ ພະອົງສະເດັດກັບ ເຢຣູຊາເລັມ

## ໂຢສິຢາປົກຄອງເໜືອຢູດາ[ກ]

[8]ໃນປີທີສິບແປດແຫ່ງລາຊະການຂອງພະອົງ ເມື່ອພະອົງຊົງກວາດລ້າງແຜ່ນດິນ ແລະ
ພຣະວິຫານແລ້ວ ພະອົງຊົງໃຊ້ຊາຟານລູກຊາຍອາຊາລີຢາ ແລະມາອາເສຢາຜູ້ວ່າລາຊະການ
ນະຄອນ ແລະໂຢອາລູກຊາຍ ໂຢອາຮັດຂ້າລາຊະການຊັ້ນຜູ້ໃຫຍ່ ໃຫ້ສ້ອມແປງພຣະວິຫານ
ຂອງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງພະອົງ [9]ເມື່ອພວກເຂົາມາຫາ ຮິນກີຢາ ມະຫາປະໂລຫິດ
ແລ້ວ ໄດ້ມອບເງິນທີ່ຄົນທັງຫລາຍນຳມາພຣະວິຫານຂອງ ພຣະເຈົ້າ ຊຶ່ງຄົນ ເລວີ ຜູ້ເຝົ້າປະຕູໄດ້
ເກັບຈາກ ມານາເຊ ແລະ ເອຟຣາຢິມ ແລະຈາກບັນດາຄົນທີ່ເຫລືອຂອງ ອິສຣາເອນ ແລະຈາກ
ຢູດາ ກັບ ເບັນຢາມິນ ທັງໝົດ ແລ້ວພວກເຂົາກັບໄປ ເຢຣູຊາເລັມ [10]ພວກເຂົາມອບໃຫ້ແກ່ ຜູ້
ເບິ່ງແຍງພຣະວິຫານຂອງ ພຣະຜູ້ເປັນເຈົ້າ ແລະມອບໃຫ້ແກ່ຜູ້ເຮັດວຽກຢູ່ໃນພຣະວິຫານຂອງ
ພຣະຜູ້ເປັນເຈົ້າ ເພື່ອການສ້ອມແປງພຣະວິຫານໃຫ້ໝັ້ນຄົງ [11]ພວກເຂົາມອບໃຫ້ແກ່ຊ່າງໄມ້
ແລະຊ່າງກໍ່ສ້າງ ເພື່ອຈະຊື້ຫີນສະຫລັກ ແລະໄມ້ກະດານ ເພື່ອປະກອບເປັນຄານສຳລັບອາຄານ
ທີ່ກະສັດແຫ່ງ ຢູດາ ໄດ້ປ່ອຍໃຫ້ຊຸດໂຊມ [12]ແລະຄົນທັງຫລາຍກໍເຮັດງານຢ່າງສັດຊື່ ຜູ້ຄຸມງານມີ

[ກ]2 ປະຫວັດກະສັດ 22:1-23:30 [ຂ]2 ປະຫວັດກະສັດ 22:37 [ຄ]2 ປະຫວັດກະສັດ 22:8

ຢາຮາດ ແລະ ໂອບາດີຢາ ຄົນ ເລວີ ລູກຫລານຂອງ ເມຣາຣີ ແລະ ເຊຄາຣີຢາ ກັບ ເມຊຸນລຳ ລູກ
ຫລານຂອງຄົນ ໂກຮາດ ເປັນຜູ້ເບິ່ງແຍງ ຄົນ ເລວີ ທຸກຄົນທີ່ຊຳນານເຄື່ອງດົນຕີ [13]ເປັນຜູ້ເບິ່ງ-
ແຍງຄົນຫາມເຄື່ອງ ແລະບັນດາຄົນທີ່ເຮັດວຽກບົວລະບັດທຸກຢ່າງ ຄົນ ເລວີ ບາງຄົນ ເປັນຄົນ
ຮັກສາ ເປັນເຈົ້າໜ້າທີ່ ແລະເປັນນາຍປະຕູ

## ການສ້ອມແປງພຣະວິຫານ[ຂ]

[14]ຂະນະທີ່ພວກ ເຂົາທັງຫລາຍນຳ ເງິນທີ່ໄດ້ຖວາຍ ໃນພຣະວິຫານຂອງ ພຣະຜູ້ເປັນເຈົ້າ ອອກ
ມາ ຮິນກີຢາ ປະໂລຫິດໄດ້ພົບໜັງສືພຣະບັນຍັດຂອງ ພຣະຜູ້ເປັນເຈົ້າ ທີ່ຊົງປະທານທາງ ໂມເຊ
[15]ແລະ ຮິນກີຢາ ເວົ້າກັບ ຊາຟານ ເລຂາວ່າ "ຂ້າພະເຈົ້າໄດ້ພົບໜັງສືພຣະບັນຍັດ ໃນພຣະວິຫານ
ຂອງ ພຣະຜູ້ເປັນເຈົ້າ" ແລະ ຮິນກີຢາ ກໍມອບໜັງສືນັ້ນໃຫ້ຊາຟານ [16]ຊາຟານ ໄດ້ນຳໜັງສືໄປ
ຖວາຍກະສັດ ແລະທູນລາຍງານກະສັດວ່າ "ສິ່ງທັງປວງທີ່ພະອົງຊົງມອບໝາຍ ແກ່ຜູ້ຮັບໃຊ້
ຂອງພະອົງໃຫ້ເຮັດນັ້ນ ພວກເຂົາກຳລັງເຮັດຢູ່ແລ້ວ" [17]ພວກເຂົາຮວບຮວມເງິນຊຶ່ງພົບໃນພຣະ-
ວິຫານຂອງ ພຣະຜູ້ເປັນເຈົ້າ ແລະໄດ້ມອບໄວ້ໃນມືຂອງຜູ້ເບິ່ງແຍງແລະຄົນງານ

## ຮິນກີຢາໄດ້ພົບພຣະບັນຍັດຂອງໂມເຊ[ຄ]

[18]ແລ້ວ ຊາຟານ ເລຂາທູນກະສັດວ່າ "ຮິນກີຢາ ປະໂລຫິດ ໄດ້ມອບໜັງສື ແກ່ຂ້າພະອົງມ້ວນ
ໜຶ່ງ" ແລ້ວ ຊາຟານ ກໍອ່ານຖວາຍຕໍ່ພະພັກກະສັດ [19]ຢູ່ມາເມື່ອກະສັດຊົງຮັບຟັງຖ້ອຍຄຳຂອງ
ພຣະບັນຍັດນັ້ນ ພະອົງຊົງຈີກເສື້ອຜ້າຂອງພະອົງ [20]ແລະກະສັດຊົງບັນຊາແກ່ຮິນກີຢາ ອາຮີ-
ການ ລູກຊາຍ ຊາຟານ ອັບໂດນ ລູກຊາຍ ມີກາ ຊາຟານ ເລຂາ ແລະ ອາສາຢາ ຜູ້ຮັບໃຊ້ຂອງ
ກະສັດ ກ່າວວ່າ [21]"ຈົ່ງໄປທູນຖາມ ພຣະຜູ້ເປັນເຈົ້າ ໃຫ້ແກ່ເຮົາ ແລະໃຫ້ແກ່ບັນດາຜູ້ທີ່ເຫລືອຢູ່
ໃນ ອິສຣາເອນ ແລະໃນ ຢູດາ ກ່ຽວກັບຖ້ອຍຄຳໃນໜັງສືທີ່ໄດ້ພົບນັ້ນ ເພາະວ່າພຣະພິໂລດ
ຂອງ ພຣະຜູ້ເປັນເຈົ້າ ທີ່ຖອກລົງ ເໜືອເຮົານັ້ນຍິ່ງໃຫຍ່ຫລາຍ ດ້ວຍວ່າບັນພະບູລຸດຂອງເຮົາບໍ່ໄດ້
ຮັກສາພຣະທຳຂອງ ພຣະຜູ້ເປັນເຈົ້າ ຕາມທີ່ຂຽນໄວ້ໃນໜັງສືນີ້ທຸກປະການ"

## ການອ່ານພຣະບັນຍັດໄດ້ນຳການກັບໃຈໃໝ່ມາ[ກ]

[22]ຮິນກີຢາ ແລະຄົນ ເຫລົ່ານັ້ນທີ່ກະສັດຊົງໃຊ້ໄປຈຶ່ງ ໄປຫາ ຮຸນດາ ຍິງຜູ້ທຳນວາຍ ເມຍຂອງ
ຊານລູມ ລູກຊາຍ ຕິກວາ ລູກຊາຍ ຮາສະຣາ ຜູ້ເບິ່ງແຍງເສື້ອຜ້າຂອງພະອົງ (ນາງຢູ່ໃນ ເຢຣູ-
ຊາເລັມ ທີ່ແຂວງສອງ ຫລືເຂດທີ່ສ້າງຂຶ້ນໃໝ່) ແລະເວົ້າກັບນາງ ເຖິງເລື່ອງນັ້ນ [23]ນາງເວົ້າກັບ
ພວກ ເຂົາວ່າ "ພຣະຜູ້ເປັນເຈົ້າ ພຣະເຈົ້າ ແຫ່ງ ອິສຣາເອນ ກ່າວດັ່ງນີ້ວ່າ ຈົ່ງບອກຊາຍຜູ້ທີ່ໃຊ້
ພວກເຈົ້າໃຫ້ມາຫາເຮົາວ່າ [24]'ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເບິ່ງແມ ເຮົາຈະນຳເຫດຊົ່ວຮ້າຍມາ
ເໜືອສະຖານທີ່ນີ້ ແລະ ເໜືອຊາວ ເມືອງນີ້ ຄືຄຳສາບ ແຊ່ງທັງໝົດທີ່ບັນທຶກໄວ້ໃນໜັງສືຊຶ່ງໄດ້
ອ່ານຖວາຍຕໍ່ພຣະພັກກະສັດ ແຫ່ງ ຢູດາ ນັ້ນ [25]ເພາະວ່າພວກ ເຂົາໄດ້ປະຖິ້ມເຮົາ ແລະໄດ້ ເຜົາ
ເຄື່ອງຫອມຖວາຍພະອື່ນ ເພື່ອພວກເຂົາຈະເຮັດໃຫ້ເຮົາຮ້າຍດ້ວຍການງານທັງໝົດ ແຫ່ງມືຂອງ
ພວກເຂົາ ເພາະສະນັ້ນ ພຣະພິໂລດຂອງເຮົາຈະຖອກລົງ ເໜືອສະຖານທີ່ນີ້ ແລະຈະດັບບໍ່ໄດ້'
[26]ແຕ່ກະສັດຂອງ ຢູດາ ຜູ້ໃຊ້ເຈົ້າໃຫ້ມາທູນ ພຣະຜູ້ເປັນເຈົ້ານັ້ນ ເຈົ້າຈົ່ງທູນທ່ານດັ່ງນີ້ວ່າ 'ພຣະ-

[ກ]2 ປະຫວັດກະສັດ 22:9-13 [ຂ]2 ປະຫວັດກະສັດ 22:14-20 [ຄ]2 ປະຫວັດກະສັດ 23:12

ຜູ້ເປັນເຈົ້າ ພຣະເຈົ້າ ແຫ່ງ ອິສຣາເອນ ກ່າວດັ່ງນີ້ວ່າ ເລື່ອງຖ້ອຍຄຳທີ່ເຈົ້າໄດ້ຍິນນັ້ນ [27]ເພາະ
ຈິດໃຈຂອງເຈົ້າອ່ອນແອ ແລະເຈົ້າໄດ້ຖ່ອມຕົວລົງຕໍ່ພຣະພັກ ພຣະເຈົ້າ ເມື່ອເຈົ້າໄດ້ຍິນຖ້ອຍຄຳ
ທີ່ກ່າວຕໍ່ສູ້ສະຖານທີ່ນີ້ ແລະຊາວເມືອງນີ້ ເຈົ້າໄດ້ຖ່ອມຕົວລົງຕໍ່ໜ້າເຮົາ ແລະເຈົ້າໄດ້ຈີກເສື້ອ
ຜ້າຂອງເຈົ້າ ແລະຮ້ອງໄຫ້ຕໍ່ໜ້າເຮົາ ພຣະຜູ້ເປັນເຈົ້າກ່າວວ່າ ເຮົາໄດ້ຟັງເຈົ້າດ້ວຍ [28]ເບິ່ງແມ
ເຮົາຈະພາເຈົ້າໄປຢູ່ກັບບັນພະບູລຸດຂອງເຈົ້າ ແລະພວກເຂົາຈະພາເຈົ້າໄປສູ່ບ່ອນຝັງສົບຢ່າງ
ສັນຕິ ແລະຕາຂອງເຈົ້າຈະບໍ່ເຫັນບັນດາເຫດຊົ່ວຮ້າຍທີ່ເຮົາຈະນຳມາເໜືອສະຖານທີ່ນີ້ ແລະ
ຊາວເມືອງນີ້" ພວກເຂົາທັງຫລາຍຈຶ່ງນຳພຣະທຳກັບມາຫາກະສັດ

## ຄຳທຳນວາຍຂອງນາງຮຸນດາ[ຂ]

[29]ແລ້ວກະສັດຮັບສັ່ງໃຫ້ຮວບຮວມບັນດາຜູ້ໃຫຍ່ຂອງ ຢູດາ ແລະ ເຢຣູຊາເລັມ [30]ກະສັດສະ-
ເດັດຂຶ້ນໄປພຣະວິຫານຂອງ ພຣະຜູ້ເປັນເຈົ້າ ພ້ອມກັບຄົນທັງປວງຂອງ ຢູດາ ແລະຊາວ ເຢຣູ-
ຊາເລັມ ກັບປະໂລຫິດແລະຄົນ ເລວີ ຄົນທັງປວງທັງໃຫຍ່ ແລະນ້ອຍ ພະອົງຊົງອ່ານຖ້ອຍຄຳທັງ
ໝົດໃນໜັງສືຄຳໝັ້ນສັນຍາທີ່ພົບໃນພຣະວິຫານຂອງ ພຣະຜູ້ເປັນເຈົ້າ ໃຫ້ພວກເຂົາຟັງ

## ການອ່ານພຣະບັນຍັດໃຫ້ປະຊາຊົນທັງປວງຟັງ[ຄ]

[31]ກະສັດປະທັບຢືນຢູ່ໃນບ່ອນຂອງພະອົງ ແລະເຮັດຄຳໝັ້ນສັນຍາຕໍ່ພຣະພັກ ພຣະຜູ້ເປັນເຈົ້າ
ວ່າຈະຊົງດຳເນີນຕາມ ພຣະຜູ້ເປັນເຈົ້າ ແລະຮັກສາພຣະບັນຍັດ ແລະກົດເກນຂອງພຣະອົງ
ດ້ວຍສຸດຈິດສຸດໃຈ ຈະຊົງປະກອບກິດຕາມຖ້ອຍຄຳຂອງຄຳໝັ້ນສັນຍາຊຶ່ງບັນທຶກໄວ້ໃນໜັງສື
ມ້ວນນີ້ [32]ແລ້ວພະອົງຊົງຮັບສັ່ງບັນດາຜູ້ທີ່ຢູ່ໃນ ເຢຣູຊາເລັມ ໃນ ເບັນຢາມິນ ໃຫ້ເຂົ້າສ່ວນໃນ
ຄຳໝັ້ນສັນຍານັ້ນ ແລະຊາວ ເຢຣູຊາເລັມ ກໍເຮັດຕາມຄຳໝັ້ນສັນຍາຂອງ ພຣະເຈົ້າ ພຣະເຈົ້າ
ຂອງບັນພະບູລຸດຂອງພວກເຂົາທັງຫລາຍ [33]ໂຢສີຢາ ໄດ້ເອົາສິ່ງໜ້າກຽດຊັງທັງປວງ ໄປເສຍ
ຈາກເຂດແດນທັງໝົດທີ່ເປັນຂອງປະຊາຊົນ ອິສຣາເອນ ແລະຊົງກະທຳໃຫ້ບັນດາຜູ້ທີ່ຢູ່ໃນ ອິ-
ສຣາເອນ ບົວລະບັດ ພຣະຜູ້ເປັນເຈົ້າ ພຣະເຈົ້າຂອງພວກເຂົາຕະຫລອດລາຊະການຂອງພະອົງ
ພວກເຂົາບໍ່ໄດ້ຫັນໄປຈາກການຕິດຕາມ ພຣະຜູ້ເປັນເຈົ້າ ພຣະເຈົ້າ ແຫ່ງບັນພະບູລຸດຂອງພວກ
ເຂົາ

# ບົດທີ 35

## ກະສັດ ແລະປະຊາຊົນເຮັດຄຳພັ້ນສັນຍາກັບພຣະເຈົ້າ[ກ]

[1]ຫລາຍກວ່ານັ້ນ ໂຢສີຢາ ຊົງຖືເທດສະການ ປັດສະຄາ ຖວາຍ ແດ່ ພຣະຜູ້ເປັນເຈົ້າ ໃນ ເມືອງ
ເຢຣູຊາເລັມ ພວກເຂົາຂ້າແກະປັດສະຄາ ໃນວັນທີສິບສີ່ຂອງເດືອນຕົ້ນ [2]ພະອົງຊົງແຕ່ງຕັ້ງປະ-
ໂລຫິດໃຫ້ປະຈຳໜ້າທີ່ ແລະຊົງສະໜັບສະໜູນພວກເຂົາໃນການບົວລະບັດພຣະວິຫານ ແຫ່ງ
ພຣະຜູ້ເປັນເຈົ້າ [3]ແລະພະອົງກ່າວກັບຄົນ ເລວີ ຜູ້ບໍລິສຸດສະເພາະ ພຣະຜູ້ເປັນເຈົ້າ ຜູ້ສອນ ອິ-
ສຣາເອນ ທັງປວງວ່າ "ຈົ່ງວາງຫີບບໍລິສຸດໄວ້ໃນພຣະວິຫານທີ່ ໂຊໂລໂມນ ລູກຊາຍຂອງ ດາວິດ
ກະສັດຂອງ ອິສຣາເອນ ຊົງສ້າງໄວ້ ເຈົ້າທັງຫລາຍບໍ່ຕ້ອງໃສ່ບ່າຫາມໄປອີກ ບັດນີ້ຈົ່ງບົວລະບັດ

[ກ]2 ປະຫວັດກະສັດ 23:3

ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງເຈົ້າ ແລະ ອິສຣາເອນ ປະຊາຊົນຂອງພຣະອົງ [4]ຈົ່ງຕຽມຕົວຂອງ
ເຈົ້າຕາມເຮືອນບັນພະບູລຸດຂອງເຈົ້າເປັນໝວດໆ ຕາມບັນທຶກພະລາຊະດຳລັດຊີ້ແຈງຂອງ ດາ-
ວິດ ກະສັດ ແຫ່ງ ອິສຣາເອນ ແລະຕາມບັນທຶກພະລາຊະດຳລັດຊີ້ແຈງຂອງ ໂຊໂລໂມນ ລູກຊາຍ
ຂອງພະອົງ [5]ແລະຢືນປະຈຳຢູ່ໃນສະຖານທີ່ບໍລິສຸດ ຕາມພວກຕ່າງໆຕາມຄອບຄົວຂອງບັນ-
ພະບູລຸດທີ່ ເປັນພີ່ນ້ອງຂອງທ່ານ ຜູ້ເປັນປະຊາຊົນ ແລະຕາມສ່ວນ ແບ່ງຂອງ ແຕ່ລະຄອບຄົວ
ຂອງຄົນ ເລວີ [6]ແລະຂ້າແກະ ປັດສະຄາ ຊຳລະຕົນ ໃຫ້ບໍລິສຸດ ແລະຕຽມໄວ້ໃຫ້ພີ່ນ້ອງຂອງ ເຈົ້າ
ເພື່ອໃຫ້ພວກເຂົາເຮັດຕາມພຣະທຳຂອງ ພຣະຜູ້ເປັນເຈົ້າ ທາງ ໂມເຊ ນັ້ນ”
[7]ແລ້ວ ໂຢສີຢາ ໄດ້ຊົງບໍລິຈາກ ແກ່ປະຊາຊົນ ເປັນ ເຄື່ອງ ປັດສະຄາ ບູຊາສຳລັບຄົນທັງປວງທີ່ຢູ່
ບ່ອນນັ້ນເປັນລູກແກະ ແລະລູກແບ້ຈາກຝູງແບ້ແກະຈຳນວນສາມໝື່ນໂຕ ແລະງົວເຖິກສາມພັນ
ໂຕ ສັດເຫລົ່ານີ້ໄດ້ມາຈາກຊັບສິນຂອງກະສັດ [8]ແລະເຈົ້ານາຍຂອງພະອົງບໍລິຈາກດ້ວຍຄວາມ
ເຕັມໃຈແກ່ປະຊາຊົນ ແກ່ປະໂລຫິດ ແລະແກ່ຄົນ ເລວີ. ຮິນກີຢາ ເຊຄາຣີຢາ ແລະ ເຢຮີເອນ
ເຈົ້າໜ້າທີ່ຊັ້ນຫົວໜ້າຂອງພຣະວິຫານ ແຫ່ງ ພຣະເຈົ້າ ໄດ້ມອບລູກແກະ ແລະລູກແບ້ສອງພັນ
ຫົກຮ້ອຍ ໂຕກັບ ງົວເຖິກ ສາມຮ້ອຍ ໂຕ ແກ່ປະໂລຫິດ ເປັນ ເຄື່ອງ ປັດສະຄາ ບູຊາ [9]ໂກນານີຢາ
ແລະ ເຊມາຢາ ກັບ ເນທາເນນ ພວກນ້ອງຊາຍຂອງພວກເຂົາ ຮາຊາບີຢາ ແລະ ເຢອີເອນ
ກັບ ໂຢຊາບັດ ຫົວໜ້າຂອງຄົນ ເລວີ ໄດ້ໃຫ້ລູກແກະ ແລະລູກແບ້ຫ້າພັນ ໂຕກັບງົວເຖິກຫ້າຮ້ອຍ
ໂຕ ແກ່ຄົນ ເລວີ ເປັນເຄື່ອງ ປັດສະຄາບູຊາ [10]ເມື່ອຕຽມການຮຽບຮ້ອຍແລ້ວ ບັນດາປະໂລຫິດກໍ
ຢືນປະຈຳໜ້າທີ່ຂອງຕົນ ແລະຄົນ ເລວີ ກໍຢູ່ຕາມໝວດຂອງຕົນ ຕາມພະບັນຊາຂອງກະສັດ
[11]ແລ້ວພວກເຂົາກໍຂ້າແກະ ປັດສະຄາ ປະໂລຫິດກໍເອົາເລືອດຊຶ່ງຮັບຈາກມືພວກເຂົາມາຊິດໃສ່
ສ່ວນຄົນ ເລວີ ກໍລອກໜັງສັດນັ້ນ [12]ແລ້ວພວກເຂົາກໍແຍກສ່ວນທີ່ເປັນ ເຄື່ອງ ເຜົາບູຊາໄວ້ຕ່າງ-
ຫາກເພື່ອແຈກຢາຍໄດ້ຕາມພວກຕ່າງໆ ຜູ້ເປັນປະຊາຊົນທີ່ແບ່ງເປັນແຕ່ລະຄອບຄົວ ໃຫ້ຖວາຍ
ແດ່ ພຣະຜູ້ເປັນເຈົ້າ ດັ່ງທີ່ບັນທຶກໄວ້ໃນໜັງສືຂອງ ໂມເຊ ແລະເຮັດກັບງົວເຖິກທຳນອງດຽວກັນ
ນີ້ [13]ພວກເຂົາກໍປີ້ງແກະ ປັດສະຄາ ດ້ວຍໄຟຕາມກົດ ແລະຕົ້ມເຄື່ອງບູຊາບໍລິສຸດອື່ນໆໃນໝໍ້ດິນ
ໃນໝໍ້ນ້ຳຊາ ແລະໃນກະທະ ແລະນຳໄປໃຫ້ປະຊາຊົນທັງປວງໂດຍໄວ [14]ພາຍຫລັງຈຶ່ງຈັດຕຽມ
ຊີ້ນສຳລັບຕົນ ເອງ ແລະສຳລັບປະໂລຫິດ ເພາະວ່າປະໂລຫິດລູກຫລານຂອງ ອາໂຣນ ຕິດທຸລະ
ໃນການຖວາຍ ເຄື່ອງ ເຜົາບູຊາ ແລະສ່ວນໄຂມັນຈົນຮອດກາງຄືນ ຄົນ ເລວີ ຈຶ່ງຕຽມ ເພື່ອຕົນ
ເອງ ແລະ ເພື່ອປະໂລຫິດລູກຫລານຂອງ ອາໂຣນ [15]ບັນດານັກຮ້ອງທີ່ເປັນລູກຫລານຂອງ ອາ-
ສັບ ຢູ່ປະຈຳທີ່ຂອງຕົນ ຕາມບັນຊາຂອງ ດາວິດ ອາສັບ ແລະ ເຮມານ ກັບ ເຢດູທູນ ຜູ້ທຳ-
ນວາຍຂອງກະສັດ ແລະ ຄົນເຝົ້າປະຕູກໍຢູ່ປະຈຳທຸກປະຕູ ບໍ່ໃຫ້ປະວຽກງານໜ້າທີ່ຂອງຕົນ
ເພາະຄົນ ເລວີ ພີ່ນ້ອງຂອງພວກເຂົາ ໄດ້ຈັດຕຽມໄວ້ໃຫ້ພວກເຂົາແລ້ວ [16]ພວກເຂົາຈຶ່ງຕຽມການ
ບົວລະບັດທັງໝົດ ແດ່ ພຣະຜູ້ເປັນເຈົ້າ ໃນມື້ດຽວນັ້ນ ເພື່ອຈະຖືເທດສະການ ປັດສະຄາ ແລະ
ຖວາຍ ເຄື່ອງ ເຜົາບູຊາເທິງ ແທ່ນບູຊາຂອງ ພຣະຜູ້ເປັນເຈົ້າ ຕາມພະບັນຊາຂອງກະສັດ ໂຢສີຢາ
[17]ປະຊາຊົນ ອິສຣາເອນ ຜູ້ຢູ່ບ່ອນນັ້ນໄດ້ຖືເທດສະການ ປັດສະຄາ ເວລານັ້ນ ແລະ ເທດສະການ
ກິນ ເຂົ້າຈີ່ບໍ່ມີເຊື້ອ ແປງ ເຈັດມື້ [18]ຕັ້ງແຕ່ສະໄໝຂອງຜູ້ທຳນວາຍ ຊາມູເອນ ກໍບໍ່ມີເທດສະການ

ປັດສະຄາ ຄືຢ່າງນີ້ໃນ ອິສຣາເອນ ບໍ່ມີກະສັດແຫ່ງ ອິສຣາເອນ ຈັກອົງໜຶ່ງທີ່ຖືເທດສະການ ປັດ-
ສະຄາ ຢ່າງທີ່ ໂຢສີຢາ ໄດ້ຊົງຖືນີ້ ບັນດາປະໂລຫິດກັບຄົນ ເລວີ ແລະ ຢູດາ ກັບ ອິສຣາເອນ ທັງ
ປວງທີ່ຢູ່ພ້ອມກັນ ທັງຊາວ ເຢຣູຊາເລັມ [19]ເຂົາຖືເທດສະການ ປັດສະຄາ ນີ້ໃນປີທີສິບແປດແຫ່ງ
ລາຊະການ ໂຢສີຢາ

## ການຖືເທດສະການປັດສະຄາ[ກ]

[20]ຫລັງຈາກສິ່ງທັງປວງເຫລົ່ານີ້ ເມື່ອ ໂຢສີຢາ ໄດ້ຈັດຕຽມພຣະວິຫານໄວ້ ເນໂກ ກະສັດແຫ່ງ
ເອຢິບ ໄດ້ສະເດັດຂຶ້ນໄປສູ້ຮົບທີ່ ກາເກມິດ ຢູ່ແມ່ນ້ຳ ເອຟຣາດ ແລະ ໂຢສີຢາ ກໍສະເດັດອອກໄປ
ສູ້ຮົບກັບພະອົງ [21]ແຕ່ ເນໂກ ຮັບສັ່ງໃຫ້ຜູ້ສົ່ງຂ່າວໄປທູນ ໂຢສີຢາ ວ່າ “ກະສັດແຫ່ງ ຢູດາ ເອີຍ
ເຮົາກັບທ່ານກ່ຽວຂ້ອງກັນຢ່າງໃດ ມື້ນີ້ເຮົາບໍ່ໄດ້ມາຕໍ່ສູ້ທ່ານ ແຕ່ຕໍ່ສູ້ກັບເຊື້ອສາຍທີ່ເຮົາເຮັດສົງ-
ຄາມດ້ວຍ ເພາະ ພຣະເຈົ້າ ຊົງບັນຊາເຮົາໃຫ້ຮີບລົງມືເຮັດ ຂໍຢ່າຂັດຂວາງ ພຣະເຈົ້າ ຜູ້ຊົງສະຖິດ
ຢູ່ກັບເຮົາ ຢ້ານວ່າພຣະອົງຈະຊົງທຳລາຍທ່ານເສຍ” [22]ເຖິງປານນັ້ນກໍດີ ໂຢສີຢາ ບໍ່ໄດ້ຫັນພະ
ພັກໄປຈາກພະອົງ ແຕ່ຊົງປອມພະອົງ ເພື່ອຈະສູ້ຮົບກັບພະອົງ ບໍ່ໄດ້ຟັງພະດຳລັດຂອງ ເນໂກ ທີ່
ອອກຈາກພຣະໂອດຂອງ ພຣະເຈົ້າ ແຕ່ເຂົ້າຮົບໃນພູເຂົາ ເມກິດໂດ [23]ແລະນັກທະນູໄດ້ຍິງກະ-
ສັດ ໂຢສີຢາ ກະສັດ ໂຢສີຢາ ກ່າວກັບຂ້າລາຊະການຂອງພະອົງວ່າ “ຈົ່ງພາເຮົາໄປເສຍ ເພາະ
ເຮົາຖືກບາດເຈັບສາຫັດແລ້ວ” [24]ຂ້າລາຊະການຂອງພະອົງຈຶ່ງນຳພະອົງອອກຈາກລົດຮົບ ແລະ
ໃຫ້ພະອົງປະທັບໃນລົດຮົບຄັນທີສອງຂອງພະອົງ ເພື່ອນຳພະອົງມາ ເຢຣູຊາເລັມ ຕໍ່ມາພະອົງກໍ
ສິ້ນພະຊົນ ພວກເຂົາຝັງພະສົບໄວ້ໃນອຸບໂມງແຫ່ງບັນພະບູລຸດຂອງພະອົງ ຢູດາ ແລະ ເຢຣູ-
ຊາເລັມ ທັງປວງໄດ້ໄວ້ທຸກໃຫ້ ໂຢສີຢາ [25]ເຢເຣມີຢາ ກ່າວບົດເພງຄ່ຳຄວນຖວາຍ ໂຢສີຢາ ດ້ວຍ
ແລະບັນດານັກຮ້ອງຊາຍ ແລະນັກຮ້ອງຍິງທັງປວງກ່າວເຖິງ ໂຢສີຢາ ໃນບົດເພງຂອງເພິ່ນຈົນ
ທຸກມື້ນີ້ ພວກເຂົາເຮັດເລື່ອງນີ້ໃຫ້ເປັນກົດໃນ ອິສຣາເອນ ເພງນີ້ກໍມີບັນທຶກໄວ້ໃນໜັງສືເພງຄ່ຳ
ຄວນ

[26]ສ່ວນພະລາຊະກິດນອກນັ້ນຂອງ ໂຢສີຢາ ແລະຄວາມດີຂອງພະອົງຕາມທີ່ບັນທຶກໄວ້ໃນ
ພຣະບັນຍັດຂອງ ພຣະຜູ້ເປັນເຈົ້າ [27]ແລະພະລາຊະກິດຂອງພະອົງ ຕັ້ງແຕ່ຕົ້ນຈົນຈົບ ກໍມີບັນ-
ທຶກໄວ້ໃນໜັງສືຂອງກະສັດແຫ່ງ ອິສຣາເອນ ແລະ ຢູດາ

# ບົດທີ 36

## ການສິ້ນພະຊົນຂອງໂຢສີຢາ[ຂ]

[1]ປະຊາຊົນແຫ່ງແຜ່ນດິນໄດ້ຕັ້ງ ເຢໂຮອາຮາດ ລູກຊາຍຂອງ ໂຢສີຢາ ແລະໃຫ້ພະອົງເປັນກະ-
ສັດແທນບິດາຂອງພະອົງໃນ ເຢຣູຊາເລັມ [2]ເມື່ອ ເຢໂຮອາຮາດ ເລີ່ມປົກຄອງ ພະອົງມີອາຍຸຊາວ
ສາມປີ ແລະຊົງປົກຄອງໃນ ເຢຣູຊາເລັມ ສາມເດືອນ [3]ແລ້ວກະສັດແຫ່ງ ເອຢິບ ຊົງຖອດພະອົງ
ໃນ ເຢຣູຊາເລັມ ແລະກຳນົດໃຫ້ແຜ່ນດິນນັ້ນຖວາຍບັນນາການ ເປັນເງິນໜຶ່ງຮ້ອຍຕະລັນຕົນ

[ກ]2 ປະຫວັດກະສັດ 23:21-23
[ຂ]2 ປະຫວັດກະສັດ 23:28-30 [ຂ]2 ປະຫວັດກະສັດ 23:30-33 [ຄ]2 ປະຫວັດກະສັດ 24:6-10

ແລະຄຳໜຶ່ງຕະລັນຕົນ [4]ກະສັດແຫ່ງ ເອຢິບ ຕັ້ງໃຫ້ ເອລີຢາກິມ ນ້ອງຊາຍຂອງພະອົງເປັນກະສັດ
ເໜືອ ຢູດາ ແລະ ເຢຣູຊາເລັມ ແລະຊົງປ່ຽນພະນາມຂອງພະອົງໃໝ່ວ່າ ເຢໂຮຍາກິມ ແຕ່ ເນໂກ
ຊົງຈັບ ເຢໂຮອາຮາດ ຜູ້ເປັນອ້າຍນຳໄປຍັງ ເອຢິບ
[5]ເມື່ອ ເຢໂຮຍາກິມ ເລີ່ມປົກຄອງ ພະອົງມີອາຍຸຊາວຫ້າປີ ແລະຊົງປົກຄອງໃນ ເຢຣູຊາເລັມ
ສິບເອັດປີ ພະອົງຊົງເຮັດຊົ່ວຮ້າຍໃນສາຍພຣະເນດຂອງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງພະອົງ
[6]ເນບູກາດເນັດຊາ ກະສັດແຫ່ງ ບາບີໂລນ ສະເດັດຂຶ້ນມາຕໍ່ສູ້ກັບພະອົງ ແລະຈຳຈອງພະອົງດ້ວຍ
ໂສ້ ເພື່ອພາພະອົງໄປຍັງ ບາບີໂລນ [7]ເນບູກາດເນັດຊາ ຊົງນຳເຄື່ອງໃຊ້ສ່ວນໜຶ່ງໃນພຣະວິຫານ
ຂອງ ພຣະຜູ້ເປັນເຈົ້າ ໄປນຳ ແລະຊົງເກັບໄວ້ໃນວິຫານຂອງພະອົງໃນ ບາບີໂລນ

## ເຢໂຮອາຮາດປົກຄອງ ແຕ່ຖືກເອົາອອກຈາກລາຊະສົມບັດ[ຂ]

[8]ສ່ວນພະລາຊະກິດນອກນັ້ນຂອງ ເຢໂຮຍາກິມ ແລະການໜ້າກຽດຊັງ ຊຶ່ງພະອົງຊົງກະທຳ
ເຫດການອື່ນໆທີ່ກ່ຽວກັບພະອົງ ກໍມີບັນທຶກໄວ້ໃນໜັງສືຂອງກະສັດແຫ່ງ ອິສຣາເອນ ແລະ ຢູ-
ດາ ເຢໂຮຍາກິນ ລູກຊາຍຂອງພະອົງໄດ້ປົກຄອງແທນ
[9]ເມື່ອ ເຢໂຮຍາກິນ ເລີ່ມປົກຄອງ ພະອົງມີອາຍຸສິບແປດປີ ແລະຊົງປົກຄອງໃນ ເຢຣູຊາເລັມ
ສາມເດືອນກັບສິບມື້ ພະອົງຊົງກະທຳຄວາມຊົ່ວຮ້າຍໃນສາຍພຣະເນດຂອງ ພຣະຜູ້ເປັນເຈົ້າ
[10]ເມື່ອເຖິງສິ້ນປີແລ້ວ ກະສັດ ເນບູກາດເນັດຊາ ຊົງໃຊ້ໃຫ້ນຳພະອົງມາຍັງ ບາບີໂລນ ພ້ອມກັບ
ເຄື່ອງໃຊ້ປະເສີດແຫ່ງພຣະວິຫານຂອງ ພຣະຜູ້ເປັນເຈົ້າ ແລະຕັ້ງໃຫ້ ເຊເດກີຢາ ບິຕຸລາ ລຸງຂອງ
ພະອົງເປັນກະສັດເໜືອ ຢູດາ ແລະ ເຢຣູຊາເລັມ

## ເຢໂຮຍາກິນໄດ້ປົກຄອງເປັນເວລາສາມເດືອນ[ຄ]

[11]ເມື່ອ ເຊເດກີຢາ ເລີ່ມປົກຄອງ ພະອົງມີອາຍຸຊາວເອັດປີ ແລະຊົງປົກຄອງໃນ ເຢຣູຊາເລັມ
ສິບເອັດປີ [12]ພະອົງຊົງກະທຳຄວາມຊົ່ວຮ້າຍໃນສາຍພຣະເນດຂອງ ພຣະຜູ້ເປັນເຈົ້າ ພຣະເຈົ້າ
ຂອງພະອົງ ພະອົງບໍ່ໄດ້ຖ່ອມພະອົງລົງຕໍ່ຜູ້ທຳນວາຍ ເຢເຣມີຢາ ຜູ້ກ່າວຈາກພຣະໂອດຂອງ
ພຣະຜູ້ເປັນເຈົ້າ [13]ພະອົງຊົງກະບົດເຊັ່ນກັນຕໍ່ກະສັດ ເນບູກາດເນັດຊາ ຜູ້ທີ່ຊົງໃຫ້ພະອົງສາ
ບານໃນພຣະນາມຂອງ ພຣະເຈົ້າ ພະອົງຊົງແຂງຄໍຂອງພະອົງ ເຮັດພະໄທໃຫ້ແຂງກະດ້າງ ບໍ່
ຫັນໄປຫາ ພຣະຜູ້ເປັນເຈົ້າ ພຣະເຈົ້າ ແຫ່ງ ອິສຣາເອນ [14]ຫລາຍກວ່ານັ້ນ ບັນດາປະໂລຫິດຜູ້ສຳ-
ຄັນ ແລະປະຊາຊົນກໍເຊັ່ນດຽວກັນ ພວກເຂົາບໍ່ສັດຊື່ ໂດຍຕິດຕາມບັນດາສິ່ງໜ້າກຽດຊັງຂອງ
ປະຊາຊາດ ແລະເຮັດໃຫ້ພຣະວິຫານຂອງ ພຣະຜູ້ເປັນເຈົ້າ ໃນ ເຢຣູຊາເລັມ ຊຶ່ງພຣະອົງຊົງຊຳ-
ລະໃຫ້ບໍລິສຸດນັ້ນເປັນມົນທິນໄປ

## ເຊເດກີຢາປົກຄອງເໜືອຢູດາ[ກ]

[15]ພຣະຜູ້ເປັນເຈົ້າ ພຣະເຈົ້າ ແຫ່ງບັນພະບູລຸດຂອງພວກເຂົາ ຊົງໃຊ້ໃຫ້ທູດສະຫວັນຂອງ
ພຣະອົງມາຢ່າງບໍ່ຢຸດຢັ້ງ ເພາະພຣະອົງຊົງມີພຣະໄທກະລຸນາຕໍ່ປະຊາຊົນຂອງພຣະອົງ ແລະຕໍ່
ທີ່ປະທັບຂອງພຣະອົງ [16]ແຕ່ພວກເຂົາທັງຫລາຍ ເຍາະເຍີ້ຍທູດສະຫວັນຂອງ ພຣະເຈົ້າ ແລະ
ໝິ່ນປະໝາດພຣະທຳຂອງພຣະອົງ ທັງດ່າຜູ້ທຳນວາຍຂອງພຣະອົງ ຈົນພຣະພິໂລດຂອງ ພຣະ-

[ກ]2 ປະຫວັດກະສັດ 24:17-18 [ຂ]2 ປະຫວັດກະສັດ 25:1-17

ຜູ້ເປັນເຈົ້າພຸ່ງຂຶ້ນຕໍ່ປະຊາຊົນຂອງພຣະອົງແບບແກ້ບໍ່ໄຫວ [17]ພຣະອົງຈຶ່ງຊົງນຳກະສັດແຫ່ງຄົນ
ຄັນເດອາມາຕໍ່ສູ້ພວກເຂົາທັງຫລາຍ ຜູ້ຊຶ່ງຂ້າຊາຍໜຸ່ມຂອງພວກເຂົາດ້ວຍດາບໃນ ພຣະວິຫານ
ອັນເປັນສະຖານທີ່ບໍລິສຸດຂອງພວກເຂົາ ແລະບໍ່ມີຄວາມກະລຸນາແກ່ຊາຍໜຸ່ມ ຫລືຍິງພົມມະ-
ຈາລີ ຄົນເຖົ້າຫລືຄົນຊະລາ ພຣະອົງຊົງມອບທັງໝົດໄວ້ໃນມືຂອງພວກເຂົາ [18]ເຄື່ອງໃຊ້ທັງໝົດ
ຂອງພຣະວິຫານຂອງພຣະເຈົ້າທັງໃຫຍ່ແລະນ້ອຍ ທັງຊັບສົມບັດແຫ່ງພຣະວິຫານຂອງພຣະຜູ້-
ເປັນເຈົ້າ ແລະຊັບສົມບັດແຫ່ງກະສັດ ແຫ່ງເຈົ້ານາຍຂອງພະອົງ ສິ່ງທັງໝົດນີ້ພະອົງຊົງນຳມາ
ບາບີໂລນ [19]ພວກເຂົາເຜົາພຣະວິຫານຂອງພຣະເຈົ້າ ແລະພັງກຳແພງເຢຣູຊາເລັມລົງ ແລ້ວ
ເອົາໄຟເຜົາວັງຂອງເມືອງນັ້ນຈົນໝົດ ທັງທຳລາຍເຄື່ອງໃຊ້ປະເສີດທັງປວງໃນນັ້ນ [20]ບັນດາຜູ້ທີ່
ລອດພົ້ນຈາກດາບນັ້ນ ພະອົງຊົງໃຫ້ກວາດໄປເປັນຊະເລີຍໃນບາບີໂລນ ແລະເປັນຜູ້ຮັບໃຊ້
ຂອງພະອົງ ແກ່ລາຊະວົງຂອງພະອົງ ຈົນຮອດການສະຖາປະນາລາຊະອານາຈັກເປີເຊຍ
[21]ເພື່ອໃຫ້ສຳເລັດຕາມພຣະທຳຂອງພຣະຜູ້ເປັນເຈົ້າທາງປາກຂອງເຢເຣມີຢາ ຈົນແຜ່ນດິນໄດ້
ຊົມຊື່ນຍິນດີກັບປີສະບາໂຕຄົບຖ້ວນ ເພາະທີ່ຖືກຖິ້ມຮ້າງຢູ່ນັ້ນ ເພື່ອມັນໄດ້ຢຸດພັກສະຫງົບໃຫ້
ສຳເລັດກຳນົດເຈັດສິບປີ

## ຄົນຢູດາຖືກກວາດໄປເປັນຊະເລີຍ[ຂ]

[22]ໃນປີທຳອິດແຫ່ງລາຊະການໄຊຣັດກະສັດຂອງເປີເຊຍ ເພື່ອພຣະທຳຂອງພຣະຜູ້ເປັນເຈົ້າ
ທາງປາກຂອງ ເຢເຣມີຢາຈະສຳເລັດ ພຣະຜູ້ເປັນເຈົ້າຊົງປຸກຈິດໃຈຂອງໄຊຣັດກະສັດຂອງ
ເປີເຊຍ ກະສັດຈຶ່ງຊົງມີປະກາດຕະຫລອດລາຊະອານາຈັກຂອງພະອົງ ແລະບັນທຶກເປັນລາຍ
ລັກອັກສອນລົງດ້ວຍວ່າ [23]“ໄຊຣັດກະສັດແຫ່ງເປີເຊຍກ່າວດັ່ງນີ້ວ່າ, ‘ພຣະຜູ້ເປັນເຈົ້າພຣະເຈົ້າ
ຂອງຟ້າສະຫວັນໄດ້ພະລາຊະທານບັນດາລາຊະອານາຈັກແຫ່ງແຜ່ນດິນໂລກແກ່ເຮົາ ແລະ
ພຣະອົງຊົງສັ່ງໃຫ້ເຮົາສ້າງພຣະວິຫານໃຫ້ພຣະອົງທີ່ເຢຣູຊາເລັມ ຊຶ່ງຢູ່ໃນຢູດາ ມີຜູ້ໃດໃນ
ທ່າມກາງທ່ານທັງຫລາຍທີ່ເປັນປະຊາຊົນຂອງພຣະອົງ ຂໍພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານ
ສະຖິດກັບທ່ານ ຂໍໃຫ້ທ່ານຂຶ້ນໄປສາ’”

* * *

# ເອັດຊະຣາ

## ບົດທີ 1

### ເຈົ້າຊີວິດໄຊຣັດສັ່ງໃຫ້ປະຊາຊົນອິສຣາເອນ ກັບຄືນນະຄອນເຢຣູຊາເລັມ

1ໃນລາຊະການປີທີໜຶ່ງຂອງເຈົ້າໄຊຣັດ ຈັກກະພັດແຫ່ງເມືອງເປີເຊຍ ພຣະຜູ້ເປັນເຈົ້າຊົງ
ບັນດົນຈິດໃຈໃຫ້ພະອົງອອກຄຳສັ່ງ ແລະຂຽນຂໍ້ຄວາມນັ້ນອອກ ເພື່ອປະກາດທົ່ວທຸກຫົນທຸກ
ແຫ່ງ ທົ່ວຈັກກະພົບຂອງພະອົງ ການກະທຳດັ່ງນີ້ ກໍເພື່ອໃຫ້ພຣະຄຳຂອງພຣະຜູ້ເປັນເຈົ້າທີ່ຊົງ
ກ່າວຜ່ານມາທາງຜູ້ປະກາດພຣະທຳ ເຢເຣມີຢາ ກາຍເປັນຈິງ.
2ຄຳສັ່ງເຈົ້າຊີວິດໄຊຣັດ ແຫ່ງເປີເຊຍ ມີດັ່ງນີ້ວ່າ, "ພຣະຜູ້ເປັນເຈົ້າຜູ້ຊົງສະຖິດຢູ່ເທິງສະຫວັນ
ຊັ້ນຟ້າ ຊົງໃຫ້ຂ້າພະເຈົ້າປົກຄອງທົ່ວທັງໂລກນີ້ ແລະຊົງໃຫ້ຂ້າພະເຈົ້າຮັບຜິດຊອບສ້າງພຣະວິ-
ຫານສຳລັບພຣະອົງທີ່ນະຄອນເຢຣູຊາເລັມ ໃນປະເທດຢູດາ. 3ຂໍໃຫ້ພຣະເຈົ້າສະຖິດຢູ່ນຳທ່ານ
ຜູ້ທີ່ເປັນໄພ່ພົນຂອງພຣະອົງ ພວກທ່ານຈະຕ້ອງໄປນະຄອນເຢຣູຊາເລັມທີ່ປະເທດຢູດາ ເພື່ອ
ສ້າງວິຫານຂອງພຣະຜູ້ເປັນເຈົ້າ ພຣະເຈົ້າຂອງອິສຣາເອນ ແລະພຣະເຈົ້າອົງທີ່ຕົນນະມັດ-
ສະການຢູ່ນະຄອນເຢຣູຊາເລັມ. 4ຖ້າວ່າ ໄພ່ພົນຂອງພຣະອົງຄົນໃດທີ່ຢູ່ຕ່າງຖິ່ນຢາກກັບຄືນມາ
ຂໍໃຫ້ຄົນບ້ານໃກ້ເຮືອນຄຽງຊ່ອຍເຫລືອພວກເຂົາ ພວກເຂົາຕ້ອງຈັດຫາເງິນຄຳ ສະບຽງອາຫານ
ສັດສາວາສິ່ງ ພ້ອມທັງເຄື່ອງຖວາຍບູຊາ ເພື່ອເປັນຂອງປະທານໃຫ້ແກ່ພຣະວິຫານຂອງພຣະ-
ເຈົ້າ ທີ່ນະຄອນເຢຣູຊາເລັມ."
5ແລ້ວຫົວໜ້າຄອບຄົວຂອງຕະກູນຢູດາ ແລະຕະກູນເບັນຢາມິນ ພວກປະໂລຫິດ ພວກເລ-
ວີພ້ອມທັງບຸກຄົນທີ່ໄດ້ຮັບການດົນໃຈຈາກພຣະເຈົ້າ ກໍໃຫ້ພ້ອມພາກັນໄປສ້າງພຣະວິຫານຂອງ
ພຣະຜູ້ເປັນເຈົ້າທີ່ນະຄອນເຢຣູຊາເລັມ. 6ພວກບ້ານໃກ້ຄຽງໄດ້ຊ່ອຍເຫລືອພວກເຂົາຫລາຍສິ່ງ
ຫລາຍຢ່າງ ເຊັ່ນວ່າ ເຄື່ອງໃຊ້ເປັນເງິນ ຄຳ ສະບຽງອາຫານ ສັດສາວາສິ່ງ ສິ່ງຂອງອື່ນໆທີ່ມີ-
ຄ່າ ພ້ອມທັງເຄື່ອງຖວາຍບູຊາເພື່ອເປັນການປະທານແກ່ພຣະວິຫານ.
7ເຈົ້າໄຊຣັດໄດ້ມອບຖ້ວຍ ແລະຈອກໃຫ້ພວກເຂົາ ຊຶ່ງເປັນຂອງທີ່ເຈົ້າເນບູກາດເນັດຊາ
ເອົາມາຈາກນະຄອນເຢຣູຊາເລັມ ແລະໄດ້ເອົາໄປໄວ້ໃນພະວິຫານແຫ່ງພະຂອງພະອົງ. 8ພະ
ອົງໄດ້ເອົາສິ່ງຂອງເຫລົ່ານີ້ສົ່ງຄືນໃຫ້ແກ່ມິດເຣດາດ ຫົວໜ້າຄັງປະຈຳພະລາຊະວັງ ເພື່ອໃຫ້
ເພິ່ນເຮັດບັນຊີສິ່ງຂອງແລ້ວມອບໃຫ້ແກ່ເຈົ້າເຊັດບັດຊາຜູ້ປົກຄອງຢູດາ ຊຶ່ງມີດັ່ງຕໍ່ລົງໄປນີ້ຄື:

| | |
|---|---|
| 9-10 ຖ້ວຍຄຳສຳລັບຖວາຍບູຊາ | 30 ໃບ |
| ຖ້ວຍເງິນສຳລັບຖວາຍບູຊາ | 1,000 ໃບ |
| ຖ້ວຍອື່ນໆ | ອີກ 29 ໃບ |
| ຖ້ວຍຄຳຊະນິດນ້ອຍ | 30 ໃບ |
| ຖ້ວຍເງິນຊະນິດນ້ອຍ | 410 ໃບ |

ເຄື່ອງໃຊ້ອື່ນ 1,000 ໃບ.

11 ທັງໝົດນີ້ຮ່ວມເປັນ 5,400 ໃບ ທັງຖ້ວຍເງິນ ແລະຖ້ວຍຄຳ ພ້ອມທັງສິ່ງອື່ນໆ ທີ່ເຈົ້າ
ເຊັດບັດຊາ ເອົາໄປນຳຕອນທີ່ພະອົງ ແລະຄົນອື່ນໆ ທີ່ຢູ່ຕ່າງຖິ່ນກັບດານອອກຈາກກຸງ ບາບີ-
ໂລນ ໄປສູ່ນະຄອນ ເຢຣູຊາເລັມ.

# ບົດທີ 2

## ລາຍຊື່ປະຊາຊົນທີ່ກັບໄປຍັງເຢຣູຊາເລັມ

1 ຕໍ່ໄປນີ້ແມ່ນປະຊາຊົນທີ່ຂຶ້ນມາຈາກການເປັນຊະເລີຍໃນພວກທີ່ຖືກກວາດໄປ ຊຶ່ງເນບູ-
ກາດເນັດຊາກະສັດແຫ່ງບາບີໂລນໄດ້ກວາດເອົາໄປເປັນຊະເລີຍຍັງບາບີໂລນ ແລ້ວກັບໄປຍັງ
ເຢຣູຊາເລັມ ແລະຢູດາຕ່າງກໍໄປຍັງເມືອງຂອງຕົນ
2 ພວກເຂົາທັງຫລາຍມາກັບເຊຣູບາເບນຄື ເຢຊູອາ ເນເຣມີຢາ ເສຣາຢາ ເຣເອລາຢາ ມໍ-
ເດກາຍ ບິນຊານ ມິສະປາ ບິກວາຍ ເຣຮູມ ແລະບາອານາ ຈຳນວນຜູ້ຊາຍຂອງປະຊາຊົນ
ອິສຣາເອນຄື

| | |
|---|---|
| 3 ຕະກູນປາໂຣດ | ສອງພັນໜຶ່ງຮ້ອຍເຈັດສິບສອງຄົນ |
| 4 ຕະກູນເຊຟາຕີຢາ | ສາມຮ້ອຍເຈັດສິບສອງຄົນ |
| 5 ຕະກູນອາຣາ | ເຈັດຮ້ອຍເຈັດສິບຫ້າຄົນ |
| 6 ຕະກູນປາຣາດ-ໂມອາບຄືລູກຫລານຂອງເຢຊູອາ ແລະໂຢອາບ | ສອງພັນແປດຮ້ອຍສິບສອງຄົນ |
| 7 ຕະກູນເອລາມ | ໜຶ່ງພັນສອງຮ້ອຍຫ້າສິບສີ່ຄົນ |
| 8 ຕະກູນຊັດຕຸ | ເກົ້າຮ້ອຍສີ່ສິບຫ້າຄົນ |
| 9 ຕະກູນຊັກກາຍ | ເຈັດຮ້ອຍຫົກສິບຄົນ |
| 10 ຕະກູນບານີ | ຫົກຮ້ອຍສີ່ສິບສອງຄົນ |
| 11 ຕະກູນເບບາຍ | ຫົກຮ້ອຍຊາວສາມຄົນ |
| 12 ຕະກູນອາຊະກາດ | ໜຶ່ງພັນສອງຮ້ອຍຊາວສອງຄົນ |
| 13 ຕະກູນອາໂດນີການ | ຫົກຮ້ອຍຫົກສິບຫົກຄົນ |
| 14 ຕະກູນບິກວາຍ | ສອງພັນຫ້າສິບຫົກຄົນ |
| 15 ຕະກູນອາດິນ | ສີ່ຮ້ອຍຫ້າສິບສີ່ຄົນ |
| 16 ຕະກູນອາເຕຄືຂອງເຮເຊກີຢາ | ເກົ້າສິບແປດຄົນ |
| 17 ຕະກູນເບຊາຍ | ສາມຮ້ອຍຊາວສາມຄົນ |
| 18 ຕະກູນໂຢຣາ | ໜຶ່ງຮ້ອຍສິບສອງຄົນ |
| 19 ຕະກູນຮາຊຸມ | ສອງຮ້ອຍຊາວສາມຄົນ |
| 20 ຕະກູນກິບບາ | ເກົ້າສິບຫ້າຄົນ |
| 21 ຕະກູນເບັດເລເຮັມ | ໜຶ່ງຮ້ອຍຊາວສາມຄົນ |

22 ຊາວ ເນໂຕຟາ ຫ້າສິບຫົກຄົນ
23 ຊາວ ອານາໂທດ ໜຶ່ງຮ້ອຍຊາວແປດຄົນ
24 ຊາວ ອາຊະມາເວດ ສີ່ສິບສອງຄົນ
25 ຊາວ ກີຣິຢາດ-ອາຣີມ ຊາວ ເກຟີຣາ
ແລະຊາວ ເບເອໂຣດ ເຈັດຮ້ອຍສີ່ສິບສາມຄົນ
26 ຊາວ ຣາມາ ແລະຊາວ ເກບາ ຫົກຮ້ອຍຊາວເອັດຄົນ
27 ຊາວ ມິກມາດ ໜຶ່ງຮ້ອຍຊາວສອງຄົນ
28 ຊາວ ເບັດເອນ ແລະຊາວ ອາອີ ສອງຮ້ອຍຊາວສາມຄົນ
29 ຊາວ ເນໂບ ຫ້າສິບສອງຄົນ
30 ຊາວ ມັກບິດ ໜຶ່ງຮ້ອຍຫ້າສິບຫົກຄົນ
31 ເອລາມ ອີກຄົນໜຶ່ງ ໜຶ່ງພັນສອງຮ້ອຍຫ້າສິບສີ່ຄົນ
32 ຊາວ ຮາຣີມ ສາມຮ້ອຍຊາວຄົນ
33 ຊາວ ໂລດ ຊາວ ຮາດິດ ແລະຊາວ ໂອໂນ ເຈັດຮ້ອຍຊາວຫ້າຄົນ
34 ຊາວ ເຢຣີໂກ ສາມຮ້ອຍສີ່ສິບຫ້າຄົນ
35 ຊາວ ເສນາອາ ສາມພັນຫົກຮ້ອຍສາມສິບຄົນ

## ພວກປະໂລຫິດທີ່ກັບໄປ

36ບັນດາປະໂລຫິດຄື ຄົນ ເຢດາຢາ ວົງວານ ເຢຊູອາ ເກົ້າຮ້ອຍເຈັດສິບສາມຄົນ 37ຄົນ ອິມ-
ເມ ໜຶ່ງພັນຫ້າສິບສອງຄົນ 38ຄົນ ປັດຊູ ໜຶ່ງພັນສອງຮ້ອຍສີ່ສິບເຈັດຄົນ 39ຄົນ ຮາຣີມ ໜຶ່ງພັນ
ສິບເຈັດຄົນ

## ພວກຄົນເລວີ ທີ່ກັບໄປ

40 ຄົນ ເລວີຄື ຄົນ ເຢຊູອາ ແລະ ກັດມີເອນຝ່າຍຄົນ ໂຮດາວີຢາ ເຈັດສິບສີ່ຄົນ
41 ພວກນັກຮ້ອງຄື ຄົນ ອາສັບ ໜຶ່ງຮ້ອຍຊາວແປດຄົນ
42 ລູກຫລານຄົນເຝົ້າປະຕູຄື ຄົນ ຊານລູມ ຄົນ ອາເຕ ຄົນ ຕັນໂມນ ຄົນ ອັກກຸບ ຄົນ ຮາຕີຕາ
ແລະຄົນ ໂຊບາຍ ລວມກັນໜຶ່ງຮ້ອຍສາມສິບເກົ້າຄົນ
43 ຄົນໃຊ້ປະຈຳພຣະວິຫານ ຄື
ຄົນ ຊີຮາ ຄົນ ຮາສູຟາ ຄົນ ຕັບບາໂອດ
44ເກໂຣດ ຄົນ ສີອາຮາ ຄົນ ປາໂດນ
45ເລບານາ ຄົນ ຮາກາບາ ຄົນ ອັກກຸບ
46ຮາກາບ ຄົນ ຊາມລາຍ ຄົນ ຮານານ
47ກິດເດນ ຄົນ ກາຮາ ຄົນ ເຣອາຢາ
48ເຣຊິນ ຄົນ ເນໂກດາ ຄົນ ກັດຊຳ
49ອຸດຊາ ຄົນ ປາເສອາ ຄົນ ເບສາຍ
50ອັດນາ ຄົນ ເມອູນິມ ຄົນ ເນຟີສິມ

51ບັກບຸກ ຄົນ ຮາກູຟາ ຄົນ ຮາຣູ
52ບັດຊະລູດ ຄົນ ເມຮີດາ ຄົນ ຮາຊາ
53ບາໂກດ ຄົນ ສີເສຣາ ຄົນ ເຕມາ
54ເນຊີຢາ ແລະຄົນ ຮາຕີຟາ
55 ລູກຫລານຂ້າລາຊະການຂອງ ໂຊໂລໂມນ ຄື
ຄົນ ໂສຕາຍ ຄົນ ຮັດໂສເຟເຣັດ ຄົນ ເປຣູດາ
56ຄົນ ຢາອາລາ ຄົນ ດາໂກນ ຄົນ ກິດເດນ
57ຄົນ ເຊຟາຕີຢາ ຄົນ ຮັດຕີນ ຄົນ ໂປເຄເຣັດ-ຮັດເຊບາຢີມ ແລະຄົນ ອາມີ
58ຄົນໃຊ້ປະຈຳພຣະວິຫານ ແລະລູກຫລານຂອງຂ້າລາຊະການຂອງ ໂຊໂລໂມນ
ທັງໝົດ ເປັນສາມຮ້ອຍເກົ້າສິບສອງຄົນ

59ຕໍ່ໄປນີ້ເປັນບັນດາຜູ້ທີ່ຂຶ້ນມາຈາກ ເຕນ-ເມລາ ເຕນ-ຮາຊາ ເກຣຸບ ອັດດານ ແລະອິມເມ
ເຖິງພວກເຂົາຈະພິສູດບັນພະບູລຸດຂອງເຂົາ ຫລືເຊື້ອສາຍຂອງພວກເຂົາບໍ່ໄດ້ວ່າ ພວກເຂົາເປັນ
ຄົນ ອິສຣາເອນ ຫລືບໍ່

60 ຄືຕະກູນ ເດລາຢາ ຄົນ ໂຕບີຢາ ແລະຄົນ ເນໂກດາ ລວມຫົກຮ້ອຍຫ້າສິບສອງຄົນ
61 ແລະຈາກລູກຫລານຂອງປະໂລຫິດດ້ວຍຄື
ຮາບາຢາ ຮັກກົດ ແລະ ບາຊີລາຍ
(ຜູ້ໄດ້ເມຍຈາກບຸດສາວຂອງ ບາຊີລາຍ ຄົນ ກີເລອາດ ຈຶ່ງໄດ້ຊື່ຕາມນັ້ນ)

62ຄົນ ເຫລົ່ານີ້ ເມື່ອຄົ້ນຫາຊື່ໃນທະບຽນທີ່ພວກ ເຂົາຂຶ້ນ ໄວ້ໃນສຳມະໂນຄົວ ເຊື້ອສາຍກໍບໍ່ພົບ
ຈຶ່ງຖືວ່າເປັນມົນທິນ ແລະຖືກຕັດອອກຈາກຕຳແໜ່ງປະໂລຫິດ 63ຜູ້ປົກຄອງ ເມືອງສັ່ງພວກເຂົາ
ບໍ່ໃຫ້ຮັບປະທານອາຫານບໍລິສຸດທີ່ສຸດຈົນກວ່າຈະມີປະໂລຫິດທີ່ຈະປຶກສາກັບ ອູຣີມ ແລະ ທູມ-
ມີມ ກ່ອນ

## ຈຳນວນຄົນທີ່ກັບໄປທັງໝົດ

64ຊຸມນຸມຊົນທັງໝົດລວມກັນມີ ສີ່ໝື່ນສອງພັນສາມຮ້ອຍຫົກສິບຄົນ 65ນອກຈາກຄົນໃຊ້ຊາຍ
ຍິງ ຊຶ່ງມີຢູ່ເຈັດພັນສາມຮ້ອຍສາມສິບເຈັດຄົນ ແລະມີນັກຮ້ອງຊາຍຍິງສອງຮ້ອຍຄົນ

## ຊັບສິນຂອງຄົນທີ່ກັບໄປ

66ມ້າຂອງພວກ ເຂົາມີເຈັດຮ້ອຍສາມສິບຫົກ ໂຕ ລໍຂອງພວກ ເຂົາມີສອງຮ້ອຍສີ່ສິບຫ້າ ໂຕ
67ອູດຂອງພວກເຂົາມີສີ່ຮ້ອຍສາມສິບຫ້າ ໂຕ ແລະລາຂອງພວກເຂົາມີຫົກພັນ ເຈັດຮ້ອຍຊາວ ໂຕ
68ຫົວໜ້າຄອບຄົວບາງຄົນ ເມື່ອມາ ເຖິງພຣະວິຫານຂອງ ພຣະຜູ້ເປັນເຈົ້າ ຊຶ່ງຢູ່ໃນ ເຢຣູຊາເລັມ
ໄດ້ຖວາຍຕາມໃຈສະໝັກ ເພື່ອພຣະວິຫານຂອງ ພຣະເຈົ້າ ເພື່ອຈະສ້າງພຣະວິຫານຂຶ້ນໃນບ່ອນ
ເກົ່າ 69ພວກເຂົາຖວາຍຕາມກຳລັງຂອງຕົນ ໃຫ້ແກ່ກອງທັບ ເພື່ອພະລາຊະກິດ ເປັນຄຳຫົກໝື່ນ
ໜຶ່ງພັນດາລິດ ເງິນຫ້າພັນມາເນ ແລະເຄື່ອງແຕ່ງກາຍປະໂລຫິດໜຶ່ງຮ້ອຍໂຕ

70ບັນດາປະໂລຫິດ ຄົນ ເລວີ ແລະປະຊາຊົນສ່ວນໜຶ່ງ ນັກຮ້ອງ ຄົນເຝົ້າປະຕູ ແລະຄົນໃຊ້
ປະຈຳພຣະວິຫານຢູ່ຕາມເມືອງຂອງຕົນ ແລະ ອິສຣາເອນ ທັງໝົດຢູ່ຕາມເມືອງຂອງພວກເຂົາ

# ບົດທີ 3

## ພວກອິສຣາເອນເລີ່ມຕົ້ນບະນັດສະການພຣະເຈົ້າທີ່ເຢຣູຊາເລັມ

1ຕໍ່ມາໃນເດືອນທີເຈັດ ຊາວອິສຣາເອນກໍໄດ້ຕັ້ງຖິ່ນຖານຢູ່ຕາມບ້ານເມືອງຂອງຕົນ ແລ້ວ
ທຸກໆ ຄົນໄດ້ໂຮມກັນທີ່ນະຄອນເຢຣູຊາເລັມ. 2ເຢຊູອາ ລູກຊາຍຂອງເຢໂຮຊາດັກ ພ້ອມ
ດ້ວຍພວກໝູ່ເພື່ອນທີ່ເປັນປະໂລຫິດ ເຊຣູບາເບນ ລູກຊາຍຂອງເຊອານຕິເອນພ້ອມທັງຍາດຕິ
ພີ່ນ້ອງ ໄດ້ພາກັນສ້າງແທ່ນບູຊາສຳລັບພຣະເຈົ້າຂອງອິສຣາເອນ ເພື່ອພວກເຂົາຈະໄດ້ຖວາຍ
ເຄື່ອງບູຊາ ຕາມຄຳແນະນຳທີ່ຂຽນໄວ້ໃນພຣະບັນຍັດຂອງໂມເຊຄົນຂອງພຣະເຈົ້າ. 3ເຖິງແມ່ນ
ວ່າ ພວກເຂົາຢ້ານຊົນຊາດອື່ນທີ່ອາໄສໃນປະເທດນັ້ນກໍຕາມ ພວກເຂົາກໍຍັງຕັ້ງແທ່ນບູຊາໄວ້
ບ່ອນເກົ່າຂອງມັນທຸກໆເຊົ້າແລງ ພວກເຂົາໄດ້ເຜົາຖວາຍບູຊາຢູ່ເທິງແທ່ນນັ້ນເປັນປະຈຳ.
4ພວກເຂົາເຮັດພິທີສະຫລອງຢູ່ຕູບຕາມລະບຽບ ພວກເຂົາຖວາຍເຄື່ອງບູຊາປະຈຳວັນຕາມຈຳ-
ນວນທີ່ກຳນົດໄວ້ໃນແຕ່ລະມື້. 5ນອກຈາກນີ້ ພວກເຂົາຍັງໄດ້ຖວາຍເຄື່ອງເຜົາບູຊາໃຫ້ສະໝ່ຳ-
ສະເໝີ ທັງເຄື່ອງຖວາຍບູຊາໃນວັນເດືອນອອກໃໝ່ ແລະທຸກໆສິ່ງໃນເທດສະການທີ່ພຣະຜູ້-
ເປັນເຈົ້າຊົງກຳນົດໄວ້ ແລະຖວາຍເຄື່ອງບູຊາຕາມໃຈສະໝັກຂອງໃຜລາວ. 6ພວກປະຊາຊົນ
ຍັງບໍ່ທັນຕັ້ງຕົ້ນສ້າງພຣະວິຫານ ແຕ່ໃນມື້ທຳອິດຂອງເດືອນທີເຈັດນັ້ນ ພວກເຂົາຍັງເລີ່ມຕົ້ນ
ຖວາຍເຄື່ອງບູຊາແກ່ພຣະຜູ້ເປັນເຈົ້າຢູ່.

## ພວກອິສຣາເອນລົງມາສ້າງພຣະວິຫານ

7ພວກປະຊາຊົນໄດ້ຈ່າຍເງິນໃຫ້ແກ່ຊ່າງກໍ່ຫີນ ຊ່າງໄມ້ ແລະໄດ້ເອົາອາຫານ ເຄື່ອງດື່ມ ນ້ຳ-
ມັນໝາກກອກສົ່ງໄປຍັງເມືອງຕີເຣ ແລະເມືອງຊີໂດນ ເພື່ອແລກປ່ຽນກັບໄມ້ສົນຈາກເມືອງເລ-
ບານອນ ໄມ້ເຫລົ່ານີ້ພວກເຂົາໄດ້ນຳມາເມືອງຢົບປາໂດຍທາງທະເລ ທຸກສິ່ງເຫລົ່ານີ້ໄດ້ຮັບຄຳ
ອະນຸຍາດຈາກເຈົ້າຊີວິດໄຊຣັດແຫ່ງ ເປີເຊຍ. 8ໃນເດືອນທີສອງຂອງປີທີສອງ ຫລັງຈາກກັບມາ
ຮອດນະຄອນເຢຣູຊາເລັມບ່ອນທີ່ມີພຣະວິຫານຂອງພຣະຜູ້ເປັນເຈົ້າແລ້ວ ພວກເຂົາໄດ້ລົງມື
ເຮັດວຽກ ເຊຣູບາເບນ ເຢຊູອາ ພ້ອມທັງພວກຢູດາອື່ນໆ ອີກ ຄື ພວກປະໂລຫິດ ແລະພວກ
ເລວີໄດ້ມາຮ່ວມເຮັດວຽກນຳ ຕາມຄວາມຈິງ ທຸກຄົນທີ່ມາຈາກບາບີໂລນໄດ້ຊ່ອຍໃນວຽກນີ້ໝົດ
ຊາວເລວີທີ່ມີອາຍຸຊາວປີຂຶ້ນໄປໄດ້ບັນຈຸເຂົ້າເປັນຜູ້ດູແລວຽກງານຢູ່ໃນພຣະວິຫານ.

9ດັ່ງນັ້ນ ເຢຊູອາຄົນເລວີພ້ອມທັງພວກລູກຊາຍ ແລະຍາດຕິພີ່ນ້ອງ ກັດມີເອນ ພ້ອມທັງ
ພວກລູກຊາຍຄືຄອບຄົວຂອງໂຮດາວີອາ ໄດ້ດູແລວຽກການຢູ່ໃນພຣະວິຫານ ຊາວເລວີໃນຕະ-
ກູນເຮນາດາດໄດ້ຊ່ອຍວຽກການນີ້ຄືກັນ. 10ເມື່ອພວກເຂົາເລີ່ມຕົ້ນວາງຮາກຖານພຣະວິຫານ
ພວກປະໂລຫິດຢູ່ໃນຊຸດເສື້ອຍ່າມຖືແກຢືນປະຈຳບ່ອນ ສ່ວນພວກເລວີທີ່ເປັນຄອບຄົວຄົນດຽວ
ກັນກັບອາສັບໄດ້ຖືແຊ່ງຢືນຢູ່ບ່ອນນັ້ນ ພວກເຂົາສັນລະເສີນພຣະຜູ້ເປັນເຈົ້າຕາມຄຳແນະນຳ
ຂອງກະສັດດາວິດ.

11ພວກເຂົາພາກັນຮ້ອງເພງສັນລະເສີນພຣະຜູ້ເປັນເຈົ້າໂດຍລຳໄປລຳມາວ່າ “ພຣະຜູ້ເປັນ-
ເຈົ້າ ຊົງປະກອບດ້ວຍຄວາມດີ ຄວາມຮັກຂອງພຣະອົງຊົງມີຕໍ່ພວກອິສຣາເອນຕະຫລອດໄປ”
ທຸກໆ ຄົນໄດ້ຮ້ອງສັນລະເສີນພຣະຜູ້ເປັນເຈົ້າດ້ວຍສຸດອົກສຸດໃຈ ເພາະວ່າຮາກຖານຂອງ

ພຣະວິຫານໄດ້ຕັ້ງຂຶ້ນແລ້ວ. 12ແຕ່ມີພວກປະໂລຫິດອາວຸໂສ ແລະພວກເລວີບາງຄົນ ທັງພວກ
ຫົວໜ້າຄອບຄົວບາງຄົນ ທີ່ເຄີຍເຫັນພຣະວິຫານຕັ້ງທຳອິດ ໃນຂະນະທີ່ພວກເຂົາຄອຍຖ້າເບິ່ງ
ຮາກຖານພຣະວິຫານຕັ້ງຂຶ້ນນັ້ນ. 13ບໍ່ມີໃຜສັງເກດຮູ້ໄດ້ໃນລະຫວ່າງການຮ້ອງເພງຍິນດີ ແລະ
ການຮ້ອງໄຫ້ ເພາະວ່າມັນດັງໂພດ ແລະສຽງນັ້ນກໍໄດ້ຍິນໄປຫລາຍຫລັກ.

# ບົດທີ 4

## ຄົນທີ່ບໍ່ເຊື່ອພຣະເຈົ້າພະຍາຍາມຂັດຂວາງການກໍ່ສ້າງ

1ເມື່ອສັດຕູຂອງຢູດາ ແລະເບັນຢາມິນໄດ້ຍິນວ່າ ພວກທີ່ຖືກກວາດໄປເປັນຊະເລີຍໄດ້ກັບ
ມາ ກຳລັງສ້າງພຣະວິຫານຖວາຍແດ່ພຣະຜູ້ເປັນເຈົ້າພຣະເຈົ້າແຫ່ງອິສຣາເອນ 2ພວກເຂົາ
ທັງຫລາຍໄດ້ເຂົ້າມາຫາເຊຣູບາເບນ ແລະຫົວໜ້າຂອງຕະກູນຕ່າງໆ ໂດຍເວົ້າກັບພວກເຂົາວ່າ
“ໃຫ້ເຮົາສ້າງນຳກັນກັບທ່ານ ເພາະວ່າພວກເຮົານະມັດສະການພຣະເຈົ້າຂອງທ່ານເໝືອນຢ່າງ
ທ່ານທັງຫລາຍ ແລະເຮົາໄດ້ຖວາຍສັດບູຊາແດ່ພຣະອົງຕັ້ງແຕ່ມື້ທີ່ເອຊາຮັດໂດນກະສັດແຫ່ງ
ອັດຊີເຣຍໄດ້ນຳເຮົາມາບ່ອນນີ້” 3ແຕ່ເຊຣູບາເບນ ເຢຊູອາ ແລະຄົນອື່ນໆທີ່ເປັນພວກຫົວໜ້າ
ຂອງຕະກູນທີ່ເຫລືອຢູ່ໃນອິສຣາເອນເວົ້າກັບພວກເຂົາວ່າ “ທ່ານທັງຫລາຍບໍ່ມີສ່ວນກັບເຮົາໃນ
ການສ້າງພຣະວິຫານຖວາຍແດ່ພຣະເຈົ້າຂອງເຮົາ ແຕ່ພວກເຮົາຈະສ້າງແຕ່ລຳພັງຖວາຍແດ່
ພຣະຜູ້ເປັນເຈົ້າພຣະເຈົ້າແຫ່ງອິສຣາເອນ ຕາມທີ່ກະສັດໄຊຣັດ ກະສັດແຫ່ງເປີເຊຍໄດ້ບັນຊາ
ໄວ້ແກ່ເຮົາ” 4ແລ້ວປະຊາຊົນຢູ່ແຜ່ນດິນນັ້ນໄດ້ເຮັດໃຫ້ປະຊາຊົນຢູດາທໍ້ຖອຍ ແລະເຮັດໃຫ້
ພວກເຂົາຢ້ານທີ່ຈະກໍ່ສ້າງ 5ແລະໄດ້ຈ້າງທີ່ປຶກສາໄວ້ຂັດຂວາງພວກເຂົາ ເພື່ອບໍ່ໃຫ້ພວກເຂົາສົມ
ຫວັງຕາມຈຸດປະສົງຂອງຕົນ ຕະຫລອດລາດສະການຂອງໄຊຣັດກະສັດແຫ່ງເປີເຊຍ ຈົນເຖິງ
ລາດສະການຂອງດາຣິອຸດກະສັດແຫ່ງເປີເຊຍ

6ແລະໃນລາດສະການເຊເຊັດ ຕົ້ນລາດສະການຂອງພະອົງ ພວກເຂົາທັງຫລາຍໄດ້ຂຽນ
ຟ້ອງຊາວຢູດາ ແລະເຢຣູຊາເລັມ 7ແລະໃນລາສະການຂອງອາຕາເຊເຊັດນັ້ນ ບິດຊະລາມ
ມິດເຣດາດ ແລະຕາເບເອນ ແລະພວກຂ້າລາຊະການທັງປວງຂອງພວກເຂົາໄດ້ຂຽນໄປທູນ
ອາຕາເຊເຊັດກະສັດແຫ່ງເປີເຊຍ ແລະໜັງສືນັ້ນໄດ້ຂຽນຂຶ້ນເປັນອັກສອນອາຣາມ ແລ້ວກໍແປ
ເປັນພາສາອາຣາມ

8ເຣຮູມຜູ້ບັງຄັບບັນຊາ ແລະຊິມຊາຍເລຂາໄດ້ຂຽນໜັງສືຫາເລື່ອງໃສ່ເມືອງເຢຣູຊາເລັມ
ຖວາຍກະສັດອາຕາເຊເຊັດດັ່ງຕໍ່ໄປນີ້ 9ແລ້ວເຣຮູມຜູ້ບັງຄັບບັນຊາ ຊິມຊາຍເລຂາ ກັບຂ້າລາ-
ຊະການທັງປວງຂອງເພິ່ນ ແລະບັນດາຜູ້ພິພາກສາ ພວກທູດ ຂ້າລາຊະການຂອງຊາວເປີເຊຍ
ຄົນເອເຣັກ ຊາວບາບີໂລນ ຊາວເອກຊູຊາ ຄົນເດຣາ ຄືຄົນເອລາມ 10ແລະຄົນຂອງຊາດ
ອື່ນໆ ຜູ້ຊຶ່ງອາຊູບານີປານ ເຈົ້ານາຍຜູ້ໃຫຍ່ໄດ້ສົ່ງມາໃຫ້ຕັ້ງຢູ່ໃນຫົວເມືອງຊາມາເຣຍ ແລະໃນ
ສ່ວນທີ່ເຫລືອຂອງມົນທົນທາງຟາກແມ່ນໍ້າຂ້າງຕາເວັນຕົກ

## ພວກສັດຕູຂຽນຈົດໝາຍເຖິງກະສັດອາຕາເຊເຊັດ

11ແລະນີ້ເປັນສຳເນົາຈົດໝາຍທີ່ພວກເຂົາສົ່ງໄປເຖິງພະອົງວ່າ “ເຖິງກະສັດອາຕາເຊເຊັດ ຂໍ

ກາບທູນ ຂ້າລາຊະການຂອງພະອົງ ຄືຄົນຂອງຟາກແມ່ນ້ຳຂ້າງຕາເວັນຕົກ 12ບັດນີ້ ຂໍກະສັດ
ໄດ້ຮູ້ວ່າ ພວກຊາວຢິວຊຶ່ງມາຈາກພະອົງມາຫາຂ້າພະອົງນັ້ນ ໄດ້ໄປຍັງເຢຣູຊາເລັມ ພວກເຂົາ
ກຳລັງກໍ່ສ້າງເມືອງທີ່ມັກກະບົດ ແລະຊົ່ວຮ້າຍຂຶ້ນໃໝ່ ພວກເຂົາກຳລັງຈະເຮັດກຳແພງເມືອງ
ສຳເລັດ ແລະສ້ອມແປງຮາກຖານ 13ບັດນີ້ ຂໍກະສັດໄດ້ຮູ້ວ່າ ຖ້າເມືອງນີ້ໄດ້ສ້າງຂຶ້ນໃໝ່ ແລະ
ກຳແພງເມືອງສຳເລັດແລ້ວ ພວກເຂົາຈະບໍ່ສົ່ງບັນນາການ ຄ່າທຳນຽມ ຫລືຄ່າພາສີ ແລະເງິນ
ລາຍໄດ້ຂອງຫລວງກໍຈະຂາດໄປ 14ເພາະເມື່ອຂ້າພະອົງທັງຫລາຍໄດ້ສາບານວ່າຈະສັດຊື່ຕໍ່ລາ-
ຊະວັງ ຈຶ່ງບໍ່ສົມຄວນທີ່ຂ້າພະອົງທັງຫລາຍຈະເຫັນການເສື່ອມກຽດຂອງກະສັດ ເພາະສະນັ້ນ
ຂ້າພະອົງທັງຫລາຍຈຶ່ງສົ່ງມາກາບທູນແກ່ກະສັດ 15ເພື່ອວ່າຈະໄດ້ຄົ້ນເບິ່ງໃນໜັງສືບັນທຶກຂອງ
ບັນພະບູລຸດຂອງພະອົງ ພະອົງຈະພົບໃນໜັງສືບັນທຶກວ່າເມືອງນີ້ເປັນເມືອງມັກກະບົດ ເປັນ
ອັນຕະລາຍແກ່ບັນດາກະສັດ ແລະໄດ້ມີການປັ່ນປ່ວນຂຶ້ນຈາກສະໄໝບູຮານ ເພາະເຫດນີ້ເອງ
ເມືອງນີ້ຈຶ່ງຖືກຖິ້ມໃຫ້ຮົກຮ້າງ 16ຂ້າພະອົງທັງຫລາຍຂໍກາບທູນໃຫ້ກະສັດໄດ້ຮູ້ວ່າ ຖ້າເມືອງນີ້
ໄດ້ສ້າງໃໝ່ສຳເລັດ ແລະກຳແພງເມືອງກໍສຳເລັດແລ້ວ ພະອົງຈະບໍ່ມີກຳມະສິດໃນຟາກແມ່ນ້ຳ
ຂ້າງນີ້"

## ໜັງສືຈາກກະສັດອາຕາເຊເຊັດ

17ກະສັດໄດ້ສົ່ງພະລາຊະສານຕອບໄປເຖິງ ເຣຮູມ ຜູ້ບັງຄັບບັນຊາ ແລະຊິມຊາຍ ເລຂາ ແລະ
ຂ້າລາຊະການທັງປວງຂອງພວກເຂົາຜູ້ອາໄສໃນ ຊາມາເຣຍ ແລະໃນສ່ວນທີ່ເຫລືອຂອງທາງ
ຟາກແມ່ນ້ຳຂ້າງນັ້ນວ່າ "ຂໍໃຫ້ຢູ່ເຢັນເປັນສຸກເຖີດ 18ບັດນີ້ ໜັງສືທີ່ທ່ານສົ່ງໄປຫາເຮົາກໍໄດ້ແປ
ຕໍ່ໜ້າເຮົາແລ້ວ 19ຝ່າຍເຮົາໄດ້ອອກຄຳສັ່ງ ແລະໄດ້ສອບສວນແລ້ວ ເຫັນວ່າເມືອງນີ້ແຕ່ກ່ອນ
ນັ້ນໄດ້ລຸກຂຶ້ນຕໍ່ສູ້ກະສັດ ແລະກະບົດ ທັງການປັ່ນປ່ວນໄດ້ເກີດຂຶ້ນໃນເມືອງນັ້ນ 20ເຄີຍມີກະ-
ສັດຜູ້ມີອຳນາດໄດ້ປົກຄອງ ເຢຣູຊາເລັມ ເປັນຜູ້ໄດ້ປົກຄອງທັງໝົດຟາກແມ່ນ້ຳຂ້າງນັ້ນ ຊຶ່ງ
ພວກເຂົາຖວາຍບັນນາການ ຄ່າທຳນຽມ ແລະພາສີໃຫ້ 21ເພາະສະນັ້ນ ທ່ານທັງຫລາຍຈົ່ງອອກ
ຄຳສັ່ງວ່າ ໃຫ້ຄົນເຫລົ່ານີ້ຢຸດ ແລະບໍ່ຕ້ອງສ້າງເມືອງນີ້ໃໝ່ ຈົນກວ່າເຮົາຈະອອກຄຳສັ່ງ 22ຂໍ
ລະວັງຢ່າລະເລີຍໃນເລື່ອງນີ້ ເປັນຫຍັງຈະໃຫ້ຄວາມເສື່ອມເສຍເກີດຂຶ້ນ ເປັນໄພອັນຕະລາຍຕໍ່
ກະສັດ"

## ການກໍ່ສ້າງໄດ້ຢຸດ

23ແລ້ວເມື່ອໄດ້ອ່ານສຳເນົາລາດຊະສານຂອງກະສັດ ອາຕາເຊເຊັດ ຕໍ່ໜ້າ ເຣຮູມ ແລະຊິມ-
ຊາຍ ເລຂາ ຂ້າລາຊະການທັງຫລາຍຂອງ ເພິ່ນກໍໄປຫາພວກ ຢິວ ທີ່ ເຢຣູຊາເລັມ ໃຊ້ກຳລັງ
ແລະອຳນາດເຮັດໃຫ້ພວກເຂົາຢຸດ

24ການກໍ່ສ້າງພຣະວິຫານຂອງ ພຣະເຈົ້າ ຊຶ່ງຢູ່ໃນ ເຢຣູຊາເລັມ ຈຶ່ງຢຸດ ຈົນເຖິງປີທີສອງ ແຫ່ງ
ລາຊະການ ດາຣິອຸດກະສັດແຫ່ງ ເປີເຊຍ

# ບົດທີ 5

## ຮັກກາຍ ແລະເຊຄາຣີຢາໜູນໃຈປະຊາຊົນໃຫ້ສືບຕໍ່ການກໍ່ສ້າງ

1ໃນເວລານັ້ນມີຜູ້ປະກາດພຣະຄຳສອງຄົນຄື ຮັກກາຍ ແລະເຊຄາຣີຢາລູກຊາຍອິດໂດ ໄດ້
ທຳນວາຍແກ່ພວກຢິວຜູ້ຢູ່ໃນຢູດາ ແລະເຢຣູຊາເລັມໃນພຣະນາມຂອງພຣະເຈົ້າແຫ່ງອິສຣາ-
ເອນ ຄືແກ່ພວກເຂົາ 2ແລ້ວເຊຣູບາເບນລູກຊາຍເຊອານຕີເອນ ແລະເຢຊູອາລູກຊາຍເຢໂຮ-
ຊາດັກ ໄດ້ລຸກຂຶ້ນຕັ້ງຕົ້ນສ້າງພຣະວິຫານແຫ່ງພຣະເຈົ້າ ຊຶ່ງຢູ່ໃນເຢຣູຊາເລັມຂຶ້ນໃໝ່ ແລະຜູ້
ປະກາດພຣະທຳຂອງພຣະເຈົ້າໄດ້ຢູ່ກັບເພິ່ນ ຊ່ວຍເຫລືອເພິ່ນ
3ໃນເວລາດຽວກັນນັ້ນ ຕັດເຕນາຍ ຜູ້ປົກຄອງຟາກຕາເວັນຕົກ ແລະເຊທາ-ໂບເຊນາຍ ກັບ
ຂ້າລາຊະການຂອງຕົນໄດ້ມາຫາເພິ່ນ ແລະເວົ້າກັບເພິ່ນດັ່ງນີ້ວ່າ "ຜູ້ໃດທີ່ສັ່ງໃຫ້ທ່ານກໍ່ສ້າງ
ພຣະວິຫານ ແລະກຳແພງນີ້ຈົນສຳເລັດ" 4ພວກເຂົາຖາມເພິ່ນດ້ວຍວ່າ "ຜູ້ທີ່ກຳລັງສ້າງຕຶກນີ້ ມີ
ຊື່ໃຜແດ່" 5ແຕ່ພຣະເນດຂອງພຣະເຈົ້າຢູ່ເໜືອພວກຜູ້ໃຫຍ່ຂອງພວກຢິວ ແລະພວກເຂົາກໍຫ້າມ
ບໍ່ໄດ້ຈົນກວ່າເລື່ອງນີ້ຈະຮູ້ເຖິງດາຣິອຸດ ແລະມີຄຳຕອບເປັນໜັງສືກ່ຽວກັບເລື່ອງນີ້ມາ
6ສຳເນົາຈົດໝາຍຊຶ່ງຕັດເຕນາຍຜູ້ປົກຄອງຟາກຕາເວັນຕົກ ແລະເຊທາ-ໂບເຊນາຍ ກັບ
ຂ້າລາຊະການຂອງເພິ່ນຊຶ່ງຢູ່ຟາກຕາເວັນຕົກ ສົ່ງໄປທູນກະສັດດາຣິອຸດ

## ພວກສັດຕູຂຽນເຖິງກະສັດດາລິອຸດ

7ພວກເພິ່ນໄດ້ສົ່ງໜັງສືຊຶ່ງມີຂໍ້ຄວາມຕໍ່ໄປນີ້ "ກາບທູນກະສັດດາຣິອຸດ ຂໍໄດ້ປົກຄອງຢ່າງ
ສັນຕິສຸກ 8ຂໍກະສັດໄດ້ຮູ້ວ່າຂ້າພະອົງທັງຫລາຍໄປຍັງຢູດາ ເຖິງພຣະວິຫານຂອງພຣະເຈົ້າອົງ
ຍິ່ງໃຫຍ່ຊຶ່ງກຳລັງສ້າງຂຶ້ນດ້ວຍຫີນໃຫຍ່ ແລະວາງໄມ້ໄວ້ເທິງຝາ ງານນີ້ໄດ້ດຳເນີນໄປຢ່າງ
ຫ້າວຫັນ ແລະຈະເລີນຂຶ້ນໃນມືຂອງພວກເຂົາ 9ແລ້ວຂ້າພະອົງທັງຫລາຍໄດ້ຖາມພວກຜູ້ໃຫຍ່
ເຫລົ່ານັ້ນວ່າ 'ຜູ້ໃດທີ່ສັ່ງທ່ານໃຫ້ກໍ່ສ້າງພຣະວິຫານແລະເຮັດກຳແພງນີ້ຈົນສຳເລັດ' 10ຂ້າພະອົງ
ທັງຫລາຍໄດ້ຖາມຊື່ຂອງພວກເຂົາດ້ວຍ ເພື່ອກາບທູນໃຫ້ພະອົງໄດ້ຮູ້ ເພື່ອຂ້າພະອົງຈະໄດ້ຂຽນ
ຊື່ບຸກຄົນເຫລົ່ານັ້ນທີ່ເປັນຫົວໜ້າຂອງພວກເຂົາລົງໄວ້ 11ແລະນີ້ເປັນຄຳຕອບຂອງພວກເຂົາແກ່
ຂ້າພະອົງ 'ເຮົາເປັນຜູ້ຮັບໃຊ້ຂອງພຣະເຈົ້າແຫ່ງຟ້າສະຫວັນ ແລະແຜ່ນດິນໂລກ ແລະເຮົາກຳ-
ລັງສ້າງພຣະວິຫານຊຶ່ງໄດ້ສ້າງມາຫລາຍປີແລ້ວຂຶ້ນໃໝ່ ຊຶ່ງກະສັດຜູ້ຍິ່ງໃຫຍ່ຂອງອິສຣາເອນ
ໄດ້ຊົງສ້າງໃຫ້ສຳເລັດ 12ແຕ່ເພາະວ່າບັນພະບູລຸດຂອງເຮົາໄດ້ເຮັດໃຫ້ພຣະເຈົ້າແຫ່ງຟ້າສະ-
ຫວັນໂກດຮ້າຍ ພຣະອົງໄດ້ມອບຄົນເຫລົ່ານັ້ນໄວ້ໃນພະຫັດຂອງເນບູກາດເນັດຊາກະສັດແຫ່ງ
ບາບີໂລນ ຄົນຄັນເດອາຜູ້ໄດ້ທຳລາຍພຣະວິຫານນີ້ ແລະໄດ້ກວາດເອົາປະຊາຊົນໄປຍັງບາບີ-
ໂລນ 13ເຖິງຢ່າງໃດກໍດີ ໃນປີຕົ້ນແຫ່ງລາຊະການໄຊຣັດກະສັດແຫ່ງບາບີໂລນ ກະສັດໄຊຣັດ
ໄດ້ສັ່ງໃຫ້ກໍ່ສ້າງພຣະວິຫານຂອງພຣະເຈົ້າຫລັງນີ້ຂຶ້ນໃໝ່ 14ເຄື່ອງໃຊ້ເປັນຄຳ ແລະເງິນຂອງ
ພຣະວິຫານຂອງພຣະເຈົ້າ ຊຶ່ງເນບູກາດເນັດຊາໄດ້ກວາດໄປຈາກພຣະວິຫານຊຶ່ງຢູ່ໃນເຢຣູຊາ-
ເລັມນັ້ນ ໄດ້ນຳໄປຍັງວິຫານຂອງບາບີໂລນ ສິ່ງເຫລົ່ານີ້ກະສັດໄຊຣັດໄດ້ນຳອອກມາຈາກວິ-
ຫານຂອງບາບີໂລນ ແລະໄດ້ຊົງມອບໄວ້ກັບຄົນໜຶ່ງຊື່ເຊັດບັດຊາ ຜູ້ຊຶ່ງພະອົງໄດ້ຕັ້ງໃຫ້ເປັນຜູ້
ປົກຄອງເມືອງ 15ພະອົງກ່າວກັບເພິ່ນດັ່ງນີ້ວ່າ "ຈົ່ງຮັບເຄື່ອງໃຊ້ເຫລົ່ານີ້ໄປເກັບໄວ້ໃນພຣະວິ-

ທານຊຶ່ງຢູ່ໃນ ເຢຣູຊາເລັມ ແລະຈົ່ງສ້າງພຣະວິຫານຂອງ ພຣະເຈົ້າ ຂຶ້ນໃໝ່ໃນບ່ອນເກົ່ານັ້ນ"
16 ແລ້ວ ເຊັດບັດຊາ ຄົນນີ້ໄດ້ມາວາງຮາກຖານພຣະວິຫານຂອງ ພຣະເຈົ້າ ຊຶ່ງຢູ່ໃນ ເຢຣູຊາເລັມ
ແລະຕັ້ງແຕ່ເວລານັ້ນຈົນບັດນີ້ກໍກຳລັງສ້າງຢູ່ ແລະຍັງບໍ່ສຳເລັດ'
17 ເພາະສະນັ້ນ ຖ້າກະສັດໄດ້ເຫັນດີ ກໍຂໍຊົງໃຫ້ຄົ້ນເບິ່ງໃນຄັງລາດຊະຊັບທີ່ຢູ່ໃນ ບາບີໂລນ
ເພື່ອເບິ່ງວ່າກະສັດ ໄຊຣັດ ໄດ້ສັ່ງໃຫ້ສ້າງພຣະວິຫານຫລັງນີ້ຂອງ ພຣະເຈົ້າ ຂຶ້ນໃໝ່ໃນ ເຢຣູຊາ-
ເລັມຫລືບໍ່ ແລະຂໍກະສັດຮັບສັ່ງແກ່ຂ້າພະອົງທັງຫລາຍຕາມພໍພະໄທຂອງພະອົງໃນເລື່ອງນີ້"

# ບົດທີ 6

## ພວກອິສຣາເອນຄົ້ນພົບໜັງສືຂອງເຈົ້າຊີວິດໄຊຣັດ

1 ເຈົ້າ ດາຣິອຸດ ໄດ້ອອກຄຳສັ່ງໃຫ້ຊອກຫາ ເອກະສານທີ່ມ້ຽນໄວ້ໃນຫ້ອງເກັບເອກະສານທີ່ກຸງ
ບາບີໂລນ 2 ແລ້ວພວກເຂົາກໍໄດ້ພົບໜັງສືມ້ວນໜຶ່ງຢູ່ໃນເມືອງຫລວງ ເອັກບາທານາ ແຂວງ ເມ-
ເດຍ ຊຶ່ງມີເນື້ອຄວາມດັ່ງຕໍ່ໄປນີ້ຄື:

> 3 "ໃນລາຊະການປີທີໜຶ່ງຂອງເຈົ້າ ໄຊຣັດ ພະອົງໄດ້ອອກຄຳສັ່ງໃຫ້ສ້າງພຣະວິ-
> ຫານຂຶ້ນທີ່ນະຄອນ ເຢຣູຊາເລັມ ແລະໃຫ້ມີບ່ອນຖວາຍເຄື່ອງເຜົາບູຊາໃນພຣະ-
> ວິຫານ ພຣະວິຫານນີ້ສູງຫົກສິບສອກ ແລະກວ້າງຫົກສິບສອກ. 4 ໃຫ້ສ້າງຝາ
> ດ້ວຍຫີນເປັນສາມຊັ້ນ ແລະໃຫ້ໃສ່ໄມ້ຢູ່ເທິງຫີນນັ້ນ ຄ່າໃຊ້ຈ່າຍຕົກເປັນເງິນ
> ຂອງພະຄັງຫລວງ. 5 ສ່ວນເຄື່ອງໃຊ້ເປັນເງິນເປັນຄຳທີ່ເຈົ້າ ເນບູກາດເນັດຊາ
> ໄດ້ນຳມາແຕ່ພຣະວິຫານນະຄອນ ເຢຣູຊາເລັມ ນັ້ນ ກໍໃຫ້ນຳເອົາກັບຄືນໄປໄວ້ໃນ
> ບ່ອນເກົ່າຂອງມັນ ທີ່ພຣະວິຫານໃນນະຄອນ ເຢຣູຊາເລັມ."

## ເຈົ້າຊີວິດດາຣິອຸດສັ່ງໃຫ້ສ້າງພຣະວິຫານຕໍ່

6 ແລ້ວເຈົ້າຊີວິດ ດາຣິອຸດ ໄດ້ສັ່ງດັ່ງນີ້: "ເຖິງຕັດເຕນາຍ ຜູ້ປົກຄອງແຂວງ ເອຟຣາດຕາ-
ເວັນຕົກ ພ້ອມທັງ ເຊທາ-ໂບເຊນາຍ ແລະພວກໝູ່ເພື່ອນທີ່ເປັນຂ້າລາຊະການຢູ່ທີ່ນັ້ນ ຢ່າມາຢູ່
ໃກ້ພຣະວິຫານ ແລະຢ່າຍື່ນມືເຂົ້າມາຫຍຸ້ງກ່ຽວໃນການກໍ່ສ້າງນີ້. 7 ຈົ່ງປ່ອຍໃຫ້ຜູ້ປົກຄອງ ແລະ
ພວກຜູ້ນຳຊາວຢູດາ ສ້າງພຣະວິຫານຂອງ ພຣະເຈົ້າ ຂຶ້ນໃໝ່ໃນບ່ອນເກົ່າ.
8 ດ້ວຍເຫດນີ້ ຂ້າພະເຈົ້າຂໍສັ່ງໃຫ້ທ່ານຊ່ອຍເຫລືອໃນການກໍ່ສ້າງ ຈົ່ງເອົາເງິນຈາກຄັງຫລວງ
ທີ່ໄດ້ມາຈາກການເສຍສ່ວຍໃນ ແຂວງ ເອຟຣາດ ຕາເວັນຕົກຈ່າຍເປັນຄ່າແຮງງານໃຫ້ພວກເຂົາ
ທັນທີໂລດ ເພື່ອວ່າບໍ່ໃຫ້ວຽກຢຸດຊະງັກລົງ. 9 ສິ່ງໃດທີ່ພວກປະໂລຫິດໃນນະຄອນ ເຢຣູຊາເລັມ
ຕ້ອງການໃນແຕ່ລະມື້ນັ້ນ ຈົ່ງເອົາໃຫ້ພວກເພິ່ນເຊັ່ນວ່າ ງົວນ້ອຍ ແກະ ຫລື ແບ້ນ້ອຍ ເພື່ອ
ເຜົາຖວາຍເປັນເຄື່ອງບູຊາ ແກ່ພຣະເຈົ້າ ແຫ່ງສະຫວັນຊັ້ນຟ້າ ພ້ອມທັງເຂົ້າບາເລ ເກືອ ເຫລົ້າ
ອະງຸ່ນ ແລະນ້ຳມັນໝາກກອກ. 10 ເພື່ອວ່າພວກເຂົາຈະໄດ້ເອົາສິ່ງຂອງເຫລົ່ານີ້ ຖວາຍບູຊາໃຫ້
ຖືກຕາມນ້ຳພຣະໄທຂອງ ພຣະເຈົ້າ ແຫ່ງສະຫວັນຊັ້ນຟ້າ ແລະໃຫ້ພວກເຂົາອ້ອນວອນຂໍພະພອນ
ຈາກ ພຣະເຈົ້າ ສຳລັບຂ້າພະເຈົ້າ ແລະພວກລູກຊາຍ.
11 ຂ້າພະເຈົ້າສັ່ງວ່າ ຖ້າຜູ້ໃດບໍ່ປະຕິບັດຕາມຄຳສັ່ງນີ້ ໃຫ້ຖອນໄມ້ຂື່ເຮືອນຂອງຜູ້ນັ້ນອອກ

ແຫລມປາຍ ແລ້ວສຽບລາວໃສ່ເທິງໄມ້ນັ້ນ ແລະເຮືອນຂອງລາວກໍຈະກາຍເປັນກອງຂີ້ເຫຍື້ອ.
[12]ຂໍໃຫ້ພຣະເຈົ້າ ຜູ້ຊົງເລືອກເອົານະຄອນເຢຣູຊາເລັມ ເປັນບ່ອນປະທັບ ເພື່ອໃຫ້ຄົນນະມັດສະ-
ການພຣະອົງນັ້ນ ຊົງກຳຈັດເຈົ້າຊີວິດທຸກຄົນ ຫລືຊົນຊາດໃດໆ ທີ່ລະເມີດຕໍ່ຄຳສັ່ງນີ້ ແລະພະ-
ຍາຍາມທຳລາຍພຣະວິຫານ ຂ້າພະເຈົ້າ ດາຣິອຸດ ອອກຄຳສັ່ງດັ່ງນີ້ ທຸກຄົນຕ້ອງຟັງແລະປະ-
ຕິບັດຕາມຢ່າງເຄັ່ງຄັດ.

## ພວກອິສຣາເອນຈັດງານສະຫລອງພຣະວິຫານ

[13]ຜູ້ປົກຄອງ ຕັດເຕນາຍ ເຊທາ-ໂບເຊນາຍ ພ້ອມທັງໝູ່ເພື່ອນຂ້າລາຊະການກໍປະຕິບັດຕາມ
ຄຳສັ່ງຂອງພະລາຊາຢ່າງເຄັ່ງຄັດ. [14]ພວກຜູ້ນຳຊາວຢູດາໄດ້ກໍ່ສ້າງພຣະວິຫານຢ່າງກ້າວໜ້າດີ
ຊຶ່ງເປັນໄປຕາມຄຳທຳນວາຍຂອງຮັກກາຍ ແລະເຊຄາຣິຢາລູກຊາຍຂອງອິດໂດ ພວກເຂົາໄດ້
ສ້າງພຣະວິຫານສຳເລັດລົງຕາມພຣະຄຳຂອງພຣະເຈົ້າແຫ່ງອິສຣາເອນ ແລະຂອງໄຊຣັດຂອງ
ດາຣິອຸດ ແລະຂອງອາຕາເຊເຊັດ ເຈົ້າຊີວິດແຫ່ງເປີເຊຍ. [15]ພວກເຂົາສ້າງພຣະວິຫານສຳເລັດ
ລົງໃນມື້ທີສາມຂອງເດືອນສິບສອງ ຊຶ່ງເປັນລາຊະການປີທີຫົກຂອງເຈົ້າດາຣິອຸດ.

[16]ແລ້ວຊາວອິສຣາເອນ ພວກປະໂລຫິດ ຊາວເລວີ ແລະຄົນອື່ນໆ ທີ່ກັບຄືນມາຈາກຕ່າງ
ຖິ່ນ ໄດ້ຮ່ວມກັນອຸທິດຖວາຍພຣະວິຫານຢ່າງມ່ວນຊື່ນ. [17]ໃນການອຸທິດຖວາຍນີ້ ພວກເຂົາໄດ້
ເອົາງົວນ້ອຍຮ້ອຍໂຕ ແກະສອງຮ້ອຍໂຕ ແກະນ້ອຍສີ່ຮ້ອຍໂຕ ຖວາຍບູຊາ ແລະໄດ້ເອົາແບ້ຜູ້
ສິບສອງໂຕ ຕາມຕະກູນເຜົ່າອິສຣາເອນຖວາຍສາລະພາບບາບ. [18]ພວກເຂົາຍັງໄດ້ແຕ່ງຕັ້ງ
ພວກປະໂລຫິດ ແລະພວກເລວີເປັນຜູ້ເຮັດວຽກໃນພຣະວິຫານທີ່ນະຄອນເຢຣູຊາເລັມ ຕາມຄຳ
ແນະນຳທີ່ບັນທຶກໄວ້ໃນປຶ້ມຂອງໂມເຊ.

## ງານເທດສະການປັດສະຄາ

[19]ພວກປະຊາຊົນທີ່ກັບມາແຕ່ການເປັນຊະເລີຍຢູ່ຕ່າງຖິ່ນ ໄດ້ສະເຫລີມສະຫລອງເທດສະ-
ການປັດສະຄາໃນວັນທີສິບສີ່ຂອງເດືອນທີໜຶ່ງ. [20]ພວກປະໂລຫິດ ແລະພວກເລວີ ທຸກຄົນໄດ້
ຊຳລະຕົນໃຫ້ສະອາດບໍລິສຸດຕາມປະເພນີ ພວກເຂົາຂ້າສັດສຳລັບຖວາຍບູຊາປັດສະຄາ ແກ່
ປະຊາຊົນທີ່ກັບຄືນມາ ແລະເພື່ອພວກປະໂລຫິດອື່ນໆ ທັງເພື່ອພວກເຂົາເອງ. [21]ພວກອິສຣາ-
ເອນທີ່ກັບຄືນມາຈາກການເປັນຊະເລີຍ ແລະຜູ້ທີ່ໄດ້ປະການນະມັດສະການແບບພື້ນເມືອງ ທີ່
ໄດ້ມານະມັດສະການ ພຣະຜູ້ເປັນເຈົ້າຂອງອິສຣາເອນ ໄດ້ພາກັນກິນເຄື່ອງຖວາຍບູຊາ.
[22]ພວກເຂົາໄດ້ສະເຫລີມສະຫລອງເທດສະການເຂົ້າຈີ່ບໍ່ມີເຊື້ອແປ້ງເປັນເວລາເຈັດມື້ ພວກເຂົາມີ
ຄວາມມ່ວນຊື່ນຢ່າງຍິ່ງ ເພາະວ່າພຣະຜູ້ເປັນເຈົ້າຊົງເຮັດໃຫ້ເຈົ້າຊີວິດແຫ່ງອັດຊີເຣຍ ເພິ່ງພໍໃຈ
ໃນພວກເຂົາ ແລະພະອົງໄດ້ສະໜັບສະໜູນໃຫ້ພວກເຂົາສ້າງພຣະວິຫານຂອງພຣະຜູ້ເປັນເຈົ້າ
ແຫ່ງອິສຣາເອນ.

# ບົດທີ 7

## ເອັດຊະຣາມາຮອດນະຄອນເຢຣູຊາເລັມ

[1]ຫລາຍປີຕໍ່ມາ ເມື່ອອາຕາເຊເຊັດ ເປັນເຈົ້າຈັກກະພັດແຫ່ງເປີເຊຍ ມີຊາຍຄົນໜຶ່ງຊື່ວ່າ

ເອັດຊະຣາ ເອັດຊະຣາເປັນລູກຊາຍຂອງ ເສຣາຢາຜູ້ເປັນລູກຂອງອາຊາຣີຢາ ຜູ້ເປັນລູກຂອງ
ຮິນກີຢາ. [2]ຜູ້ເປັນລູກຂອງຊານລູມ ຜູ້ເປັນລູກຂອງຊາໂດກ ຜູ້ເປັນລູກຂອງອາຮີຕຸບ. [3]ຜູ້ເປັນ
ລູກຂອງອາມາຣີຢາ ຜູ້ເປັນລູກຂອງອາຊາຣີຢາ ຜູ້ເປັນລູກຂອງເມຣາໂຢດ. [4]ຜູ້ເປັນລູກຂອງ
ເຊຣາຮີຢາ ຜູ້ເປັນລູກຂອງອຸດຊີ ຜູ້ເປັນລູກຂອງບຸກກີ. [5]ຜູ້ເປັນລູກຂອງອາບີຊູອາ ຜູ້ເປັນລູກ
ຂອງຟີເນຮາດ ຜູ້ເປັນລູກຂອງເອເລອາຊາ ຜູ້ເປັນລູກຂອງອາໂຣນ. [6]ເອັດຊະຣາເປັນຜູ້ຮອບຮູ້
ໃນດ້ານພຣະທຳທີ່ພຣະຜູ້ເປັນເຈົ້າ ແຫ່ງອິສຣາເອນໄດ້ປະທານໃຫ້ແກ່ໂມເຊ ເຈົ້າຊີວິດໄດ້ທຸກ
ສິ່ງຕາມທີ່ເອັດຊະຣາຂໍ ເພາະວ່າເພິ່ນມີພຣະພອນຈາກພຣະເຈົ້າ ເອັດຊະຣາໄດ້ເດີນທາງຈາກ
ບາບີໂລນ ສູ່ນະຄອນເຢຣູຊາເລັມ ພ້ອມທັງພວກອິສຣາເອນ. [7]ຊຶ່ງມີປະໂລຫິດ ພວກເລວີ
ນັກດົນຕີປະຈຳວິຫານ ຜູ້ເຝົ້າວິຫານ ແລະກຳມະກອນ ປີນີ້ແມ່ນປີທີເຈັດທີ່ເຈົ້າອາຕາເຊເຊັດ
ເປັນຜູ້ປົກຄອງເອງ. [8-9]ພວກເຂົາໄດ້ອອກຈາກບາບີໂລນໃນວັນທີໜຶ່ງ ເດືອນທີໜຶ່ງດ້ວຍຄວາມ
ຊິດຊ່ອຍຂອງພຣະເຈົ້າ ພວກເຂົາໄດ້ມາຮອດນະຄອນເຢຣູຊາເລັມ ໃນວັນທີໜຶ່ງເດືອນຫ້າ.
[10]ເອັດຊະຣາອຸທິດຕົນເອງຮ່ຳຮຽນພຣະທຳຂອງພຣະຜູ້ເປັນເຈົ້າ ທັງຝຶກຝົນ ແລະສັ່ງສອນ
ພຣະທຳນີ້ເປັນປະຈຳແກ່ປະຊາຊົນອິສຣາເອນ.

## ເຈົ້າຊີວິດອາຕາເຊເຊັດສົ່ງເອກະສານໃຫ້ເອັດຊະຣາ

[11]ເຈົ້າຊີວິດອາຕາເຊເຊັດ ໄດ້ມອບເອກະສານໃຫ້ ເອັດຊະຣາຜູ້ເປັນປະໂລຫິດ ແລະເປັນຜູ້
ຮອບຮູ້ໃນດ້ານພຣະທຳ ແລະພຣະຄຳສັ່ງທີ່ພຣະຜູ້ເປັນເຈົ້າຊົງມອບໃຫ້ແກ່ຊາວອິສຣາເອນ ຊຶ່ງ
ມີເນື້ອຄວາມດັ່ງຕໍ່ລົງໄປນີ້.

[12]"ຈາກພະມະຫາກະສັດອາຕາເຊເຊັດ ເຖິງປະໂລຫິດເອັດຊະຣາ ຜູ້ຮອບຮູ້ໃນດ້ານພຣະທຳ
ຂອງພຣະເຈົ້າເທິງສະຫວັນຊັ້ນຟ້າ. [13]ຂ້າພະເຈົ້າໄດ້ສັ່ງໄປທົ່ວຈັກກະພົບໃຫ້ຊາວອິສຣາເອນ
ທຸກຄົນ ທັງພວກປະໂລຫິດ ພວກເລວີທີ່ອາສາສະໝັກໃຫ້ໄປຍັງນະຄອນເຢຣູຊາເລັມນຳທ່ານ.
[14]ຂ້າພະເຈົ້າຜູ້ເປັນເຈົ້າຊີວິດ ພ້ອມທັງຜູ້ປຶກສາຂອງຂ້າພະເຈົ້າເຈັດທ່ານ ຂໍສົ່ງທ່ານໄປສືບສວນ
ຫາຕົ້ນປາຍສາຍເຫດ ທີ່ນະຄອນເຢຣູຊາເລັມ ແລະຊາວຢູດາ ເພື່ອເບິ່ງວ່າ ພຣະທຳທີ່ພຣະຜູ້-
ເປັນເຈົ້າຂອງທ່ານໄດ້ມອບໝາຍໃຫ້ແກ່ທ່ານນັ້ນເປັນຢ່າງໃດ ຍັງມີຄົນເຊື່ອຟັງຢູ່ຫລືບໍ່? [15]ທ່ານ
ຈົ່ງນຳເອົາຄຳ ແລະເງິນໄປຖວາຍດ້ວຍ ເພາະຂ້າພະເຈົ້າພ້ອມທັງທີ່ປຶກສາຂອງຂ້າພະເຈົ້າ
ປາດຖະໜາຢາກຖວາຍໃຫ້ແກ່ພຣະເຈົ້າ ແຫ່ງອິສຣາເອນ ຊຶ່ງມີພຣະວິຫານຢູ່ໃນນະຄອນເຢຣູ-
ຊາເລັມ. [16]ສ່ວນຄຳ ແລະເງິນທີ່ທ່ານຮອບຮວມໄດ້ທົ່ວແຂວງບາບີໂລນ ພ້ອມທັງຂອງທີ່ພວກ
ອິສຣາເອນ ແລະປະໂລຫິດທັງຫລາຍຖວາຍໃຫ້ແກ່ພຣະວິຫານພຣະເຈົ້າຂອງພວກເຂົາ ທີ່ນະ-
ຄອນເຢຣູຊາເລັມນັ້ນໃຫ້ທ່ານເອົາໄປຖວາຍບູຊາຄືກັນ. [17]ໃຫ້ທ່ານຈ່າຍເງິນນີ້ຢ່າງລະມັດລະວັງ
ໃຫ້ຊື້ງົວ ແກະ ແກະນ້ອຍ ເຂົ້າ ນ້ຳອະງຸ່ນ ແລະເອົາສິ່ງເຫລົ່ານີ້ຖວາຍຢູ່ເທິງແທ່ນບູຊາ ທີ່
ພຣະວິຫານໃນນະຄອນເຢຣູຊາເລັມ. [18]ທ່ານອາດຈະເອົາເງິນ ແລະຄຳທີ່ຍັງເຫລືອຢູ່ນີ້ໃຊ້ຕາມ-
ໃຈຂອງທ່ານ ແລະເພື່ອນຮ່ວມປະເທດຂອງທ່ານຕາມຄວາມປາດຖະໜາ ແຕ່ໃຫ້ເປັນຕາມນ້ຳ
ພຣະໄທຂອງພຣະເຈົ້າ. [19]ເຄື່ອງໃຊ້ທຸກຢ່າງທີ່ໄດ້ມອບໃຫ້ທ່ານ ສຳລັບໃຊ້ສອຍໃນພິທີທີ່ພຣະ-
ວິຫານນັ້ນ ໃຫ້ຖວາຍແດ່ພຣະຜູ້ເປັນເຈົ້າທີ່ນະຄອນເຢຣູຊາເລັມ. [20]ຖ້າວ່າ ທ່ານຕ້ອງການສິ່ງ

ອື່ນໆ ສຳລັບພຣະວິຫານ ທ່ານຈົ່ງເອົາໄດ້ຈາກພະຄັງຫລວງ.
21ຂ້າພະເຈົ້າ ເຈົ້າຊີວິດອາຕາເຊເຊັດ ໄດ້ສັ່ງໃຫ້ບັນດາຂ້າລາຊະການຜະແໜກຄັງເງິນຕາມ
ແຂວງເອຟຣາດຕາເວັນຕົກ ໃຫ້ຈັດຫາທຸກສິ່ງຢ່າງຮີບດ່ວນແກ່ເອັດຊະຣາຜູ້ເປັນປະໂລຫິດ
ແລະຜູ້ຮອບຮູ້ຝ່າຍພຣະທຳ ກັບພຣະຄຳສັ່ງຂອງພຣະເຈົ້າເທິງສະຫວັນຊັ້ນຟ້າ ໃນທຸກສິ່ງທີ່
ທ່ານຮ້ອງຂໍ. 22ຕາມຂອບເຂດຈຳກັດ ຄື ເງິນຫ້າໂຕນ ເຂົ້າບາເລສາມພັນໝື່ນ ເຫລົ້າອະງຸ່ນ
ສາມພັນຫ້າຮ້ອຍລິດ ນໍ້າມັນໝາກກອກສາມພັນຫົກຮ້ອຍລິດ ແລະເກືອ ໃຫ້ເອົາເທົ່າທີ່ຕ້ອງ-
ການ. 23ທ່ານຕ້ອງຈັດຫາທຸກສິ່ງຢ່າງລະມັດລະວັງ ຕາມທີ່ພຣະເຈົ້າເທິງສະຫວັນຊັ້ນຟ້າຕ້ອງ-
ການສຳລັບພຣະວິຫານຂອງພຣະອົງ ເພື່ອເປັນການຮູ້ຢ່າງແນ່ນອນວ່າ ພຣະອົງຈະຊົງພຣະພິ-
ໂລດລາຊະອານາຈັກຂອງຂ້າພະເຈົ້າ ແລະຜູ້ທີ່ຈະຂຶ້ນຄອງລາຊະສົມບັດແທນຂ້າພະເຈົ້າ.
24ທ່ານບໍ່ຄວນເກັບຄ່າທຳນຽມຈາກພວກປະໂລຫິດ ພວກເລວີ ພວກນັກດົນຕີ ພວກນາຍຍາມ
ພວກກຳມະກອນພ້ອມທັງຄົນອື່ນໆ ທີ່ມີສ່ວນກ່ຽວຂ້ອງໃນພຣະວິຫານນີ້.
25ເຈົ້າເອັດຊະຣາເອີຍ ທ່ານຈົ່ງໃຊ້ສະຕິປັນຍາທີ່ພຣະຜູ້ເປັນເຈົ້າຊົງປະທານໃຫ້ແກ່ທ່ານນັ້ນ
ແຕ່ງຕັ້ງຜູ້ປົກຄອງ ເພື່ອຄຸ້ມຄອງປະຊາຊົນທຸກຄົນທີ່ແຂວງເອຟຣາດທິດຕາເວັນຕົກຄື ທຸກຄົນທີ່
ຮູ້ຈັກພຣະທຳຂອງພຣະເຈົ້າຂອງທ່ານ ທ່ານຕ້ອງສັ່ງສອນພຣະທຳນີ້ໃຫ້ແກ່ຜູ້ທີ່ຍັງບໍ່ທັນຮູ້ຈັກ.
26ຖ້າວ່າ ຜູ້ໃດບໍ່ຍອມເຊື່ອຟັງພຣະທຳພຣະເຈົ້າຂອງທ່ານ ຫລືກົດບັນຍັດຂອງຈັກກະພັດ ຜູ້ນັ້ນ
ຕ້ອງຖືກລົງໂທດທັນທີ ຄື ປະຫານຊີວິດ ຖືກເນລະເທດ ຖືກຍຶດຊັບ ຫລືຖືກຄຸກ.

## ເອັດຊະຣາສັນລະເສີນພຣະເຈົ້າ

27ເອັດຊະຣາເວົ້າວ່າ, "ຂໍສັນລະເສີນພຣະຜູ້ເປັນເຈົ້າ ພຣະເຈົ້າຂອງປູ່ຍ່າຕາຍາຍຂອງພວກ
ເຮົາ ພຣະອົງໄດ້ຊົງເຮັດໃຫ້ເຈົ້າຊີວິດຖວາຍກຽດແດ່ພຣະວິຫານຂອງພຣະຜູ້ເປັນເຈົ້າທີ່ນະຄອນ
ເຢຣູຊາເລັມ. 28ດ້ວຍພຣະຄຸນຂອງພຣະເຈົ້າ ຂ້ານ້ອຍໄດ້ຮັບຄວາມກະລຸນາຈາກເຈົ້າຊີວິດ
ຈາກພວກຜູ້ປຶກສາ ແລະທັງບັນດາຂ້າລາຊະການທັງໝົດທີ່ມີອຳນາດ ພຣະເຈົ້າຊົງໃຫ້ຂ້ານ້ອຍ
ມີຄວາມກ້າຫານ ແລະກ້າທີ່ຈະແນະນຳຫົວໜ້າຄອບຄົວອິສຣາເອນ ຫລາຍຄົນໃຫ້ກັບຄືນມານຳ
ຂ້ານ້ອຍ.

# ບົດທີ 8

## ລາຍຊື່ເພື່ອນຮ່ວມງານຂອງເອັດຊະຣາ

1ຕໍ່ໄປນີ້ແມ່ນລາຍຊື່ຫົວໜ້າຂອງຕະກູນຕ່າງໆ ທີ່ຖືກຈັບໄປເປັນຊະເລີຍໃນບາບີໂລນ ແຕ່
ໄດ້ກັບຄືນມາຍັງກຸງເຢຣູຊາເລັມນຳເອັດຊະຣາ ໃນຄາວທີ່ກະສັດອາຕາເຊເຊັດເປັນຈັກກະພັດ:

2 ຈາກຕະກູນ ຟີເນຮາດ ມີເກໂຊມ
ຈາກຕະກູນ ອີທາມາ ມີດານີເອນ
ຈາກຕະກູນ ດາວິດ ມີຮັດຕຸຊະ
3 ຈາກຕະກູນ ເຊການີອາ
ຈາກຕະກູນ ປາໂຣດ ມີເຊຄາຣີຢາ

ພ້ອມກັບເພິ່ນມີ ຜູ້ຊາຍຜູ້ຂຶ້ນທະບຽນໄວ້ໜຶ່ງຮ້ອຍຫ້າສິບຄົນ

4 ຈາກຕະກູນ ປາຮາດ ໂມອາບ ມີເອລີເອໂຮນາຍ ລູກຊາຍ ເຊຣາຣີຢາ
ພ້ອມກັບເພິ່ນ ມີ ຜູ້ຊາຍສອງຮ້ອຍຄົນ

5 ຈາກຕະກູນ ເຊການີອາ ມີ ລູກຊາຍຂອງ ຢາຮາຊີເອນ
ພ້ອມກັບເພິ່ນມີ ຜູ້ຊາຍສາມຮ້ອຍຄົນ

6 ຈາກຕະກູນ ອາດິນ ມີເອເບັດ ລູກຊາຍ ໂຢນາທານ
ພ້ອມກັບເພິ່ນມີ ຜູ້ຊາຍຫ້າສິບຄົນ

7 ຈາກຕະກູນ ເອລາມ ມີເຢຊາຢາ ລູກຊາຍ ອາທາລີຢາ
ພ້ອມກັບເພິ່ນມີ ຜູ້ຊາຍເຈັດສິບຄົນ

8 ຈາກຕະກູນ ເຊຟາຕີຢາ ມີເຊບາດີຢາ ລູກຊາຍ ມີກາເອນ
ພ້ອມກັບເພິ່ນມີ ຜູ້ຊາຍແປດສິບຄົນ

9 ຈາກຕະກູນ ໂຢອາບ ມີໂອບາດີຢາ ລູກຊາຍ ເຢຮີເອນ
ພ້ອມກັບເພິ່ນມີ ຜູ້ຊາຍສອງຮ້ອຍສິບແປດຄົນ

10 ຈາກຕະກູນ ເຊໂລມິດ ມີ ລູກຊາຍຂອງ ໂຢສີຟີຢາ
ພ້ອມກັບເພິ່ນມີ ຜູ້ຊາຍໜຶ່ງຮ້ອຍຫົກສິບຄົນ

11 ຈາກຕະກູນ ເບບາຍ ມີເຊຄາຣີຢາ ລູກຊາຍ ເບບາຍ
ພ້ອມກັບເພິ່ນມີ ຜູ້ຊາຍຊາວແປດຄົນ

12 ຈາກຕະກູນ ອາຊະກາດ ມີໂຢຮານານ ລູກຊາຍ ຮັກກາຕານ
ພ້ອມກັບເພິ່ນມີ ຜູ້ຊາຍໜຶ່ງຮ້ອຍສິບຄົນ

13 ຈາກຕະກູນ ອາໂດນີການ ມີຜູ້ທີ່ມາພາຍຫລັງ ຕໍ່ໄປນີ້ເປັນຊື່ຂອງພວກເຂົາ
ຄືເອລີເຟເລັດ ເຢອູເອນ ແລະ ເຊມາຢາ
ພ້ອມກັບພວກເຂົາມີ ຜູ້ຊາຍຫົກສິບຄົນ

14 ຈາກຕະກູນ ບິກວາຍ ມີອຸທາຍ ແລະ ຊາກູເຣ
ພ້ອມກັບພວກເຂົາທັງສອງມີ ຜູ້ຊາຍເຈັດສິບຄົນ

## ເອັດຊະຣາຕ້ອງການໃຫ້ມີຄົນເລວີ ແລະຄົນໃຊ້ປະຈຳພຣະວິຫານໄປເພີ່ມເຕີມ

15 ຂ້າພະເຈົ້າໄດ້ຮວບຮວມພວກເຂົາທັງຫລາຍເຂົ້າມາຍັງແມ່ນໍ້າທີ່ໄຫລໄປສູ່ອາຮາວາ ເຮົາຕັ້ງ
ຄ້າຍຢູ່ບ່ອນນັ້ນສາມມື້ ເມື່ອຂ້າພະເຈົ້າສຳຫລວດເບິ່ງປະຊາຊົນ ແລະປະໂລຫິດ ຂ້າພະເຈົ້າບໍ່
ເຫັນເຊື້ອສາຍຂອງ ເລວີ ບ່ອນນັ້ນເລີຍ 16 ແລ້ວຂ້າພະເຈົ້າຈຶ່ງໃຫ້ໄປເອີ້ນ ເອລີເອເຊ ອາຣີເອນ
ເຊມາຢາ ເອນນາທານ ຢາຣິບ ເອນນາທານ ນາທານ ເຊຄາຣີຢາ ແລະ ເມຊຸນລຳ ບຸກຄົນ
ຊັ້ນຫົວໜ້າ ແລະໃຫ້ຫາ ໂຢຢາຣິບ ກັບ ເອນນາທານ ຜູ້ເປັນຄົນມີຄວາມເຂົ້າໃຈ 17 ແລ້ວສົ່ງ
ພວກເຂົາດ້ວຍຄຳສັ່ງໄປຍັງທ່ານ ອິດໂດ ບຸກຄົນຊັ້ນຫົວໜ້າຍັງສະຖານທີ່ທີ່ຊື່ ກາຊີເຟຍ ຄືໃຫ້
ບອກ ອິດໂດ ແລະພີ່ນ້ອງຂອງເພິ່ນຜູ້ເປັນຄົນໃຊ້ປະຈຳພຣະວິຫານໃນ ກາຊີເຟຍ ວ່າ ຂໍສົ່ງຜູ້ບົວ-
ລະບັດສຳລັບພຣະວິຫານຂອງ ພຣະເຈົ້າ ຂອງເຮົາມາຍັງເຮົາ

[18]ແລະໂດຍພຣະຫັດທີ່ຊົງພຣະຄຸນຂອງ ພຣະເຈົ້າ ຂອງເຮົາຢູ່ກັບເຮົາ ພວກເຂົາໄດ້ນຳຄົນທີ່ມີ
ຄວາມສາມາດມາໃຫ້ເຮົາ ເປັນເຊື້ອສາຍຂອງ ມາລີ ລູກຊາຍ ເລວີ ຜູ້ເປັນລູກຊາຍ ອິສຣາເອນ ຊື່
ເຊເຣບີຢາ ກັບລູກຊາຍ ແລະຍາດພີ່ນ້ອງລວມສິບແປດຄົນ [19]ທັງ ຮາຊາບີຢາ ແລະ ເຢຊາຢາ
ເຊື້ອສາຍຂອງ ເມຣາຣີ ກັບຍາດພີ່ນ້ອງ ແລະລູກຊາຍຂອງພວກເຂົາລວມຊາວຄົນ [20]ຄົນໃຊ້ປະ-
ຈຳພຣະວິຫານ ຊຶ່ງ ດາວິດ ແລະຂ້າລາຊະການຂອງພະອົງໄດ້ຈັດຕັ້ງຂຶ້ນໄວ້ ເພື່ອບົວລະບັດຄົນ
ເລວີ ມີຄົນໃຊ້ປະຈຳພຣະວິຫານສອງຮ້ອຍຊາວຄົນ ບຸກຄົນເຫລົ່ານີ້ທັງໝົດມີຊື່ລະບຸໄວ້

## ການຖືສິນອົດອາຫານທີ່ແມ່ນໍ້າອາຮາວາ

[21]ແລ້ວຂ້າພະເຈົ້າກໍປະກາດໃຫ້ຖືສິນອົດອາຫານບ່ອນນັ້ນ ຄືທີ່ແມ່ນໍ້າ ອາຮາວາ ເພື່ອເຮົາ
ທັງຫລາຍຈະໄດ້ຖ່ອມຕົວລົງຕໍ່ພຣະພັກ ພຣະເຈົ້າ ຂອງ ເຮົາ ເພື່ອຈະທູນຂໍຫົນທາງອັນຖືກຕ້ອງ
ຈາກພຣະອົງ ສຳລັບເຮົາ ລູກຫລານຂອງເຮົາ ແລະສິ່ງຂອງທັງໝົດຂອງເຮົາ [22]ເພາະຂ້າພະ-
ເຈົ້າອັບອາຍທີ່ຈະທູນຂໍກອງທະຫານ ແລະພົນທະຫານມ້າຈາກກະສັດ ເພື່ອຊ່ວຍເຮົາສູ້ສັດຕູ
ຕາມທາງຂອງເຮົາ ໃນເມື່ອເຮົາໄດ້ກາບທູນກະສັດແລ້ວວ່າ "ພຣະຫັດຂອງ ພຣະເຈົ້າ ຂອງເຮົາຢູ່
ກັບບັນດາຜູ້ທີ່ສະແຫວງຫາພຣະອົງສຳລັບການດີ ແຕ່ລິດທານຸພາບແລະພຣະພິໂລດຂອງພຣະ-
ອົງຕໍ່ສູ້ຄົນເຫລົ່ານັ້ນທີ່ປະຖິ້ມພຣະອົງ" [23]ເຮົາຈຶ່ງອົດອາຫານ ແລະອ້ອນວອນ ພຣະເຈົ້າ ຂອງເຮົາ
ເພື່ອເລື່ອງນີ້ ແລະພຣະອົງຊົງຟັງສຽງຮ້ອງທູນຂອງເຮົາ

## ຊັບສົມບັດມອບໄວ້ແກ່ປະໂລຫິດສິບສອງຄົນ

[24]ແລ້ວຂ້າພະເຈົ້າໄດ້ເລືອກຕັ້ງປະໂລຫິດໃຫຍ່ສິບສອງຄົນຄື ເຊເຣບີຢາ ຮາຊາບີຢາ ແລະ
ພີ່ນ້ອງຂອງພວກເຂົາທີ່ຢູ່ກັບພວກເຂົາສິບຄົນ [25]ຂ້າພະເຈົ້າໄດ້ຊັ່ງເງິນ ແລະຄຳ ກັບເຄື່ອງໃຊ້
ເຄື່ອງບູຊາສຳລັບພຣະວິຫານຂອງ ພຣະເຈົ້າ ຂອງ ເຮົາ ມອບໃຫ້ພວກເຂົາທັງຫລາຍ ຊຶ່ງກະສັດ
ແລະທີ່ປຶກສາ ລວມທັງເຈົ້ານາຍຂອງພະອົງ ແລະຄົນ ອິສຣາເອນ ທັງປວງບ່ອນນັ້ນໄດ້ຖວາຍ
ໄວ້ [26]ຂ້າພະເຈົ້າໄດ້ຊັ່ງໃສ່ມືຂອງພວກເຂົາເປັນເງິນຫົກຮ້ອຍຫ້າສິບຕະລັນຕົນ[ກ] ແລະເຄື່ອງໃຊ້
ທີ່ເຮັດດ້ວຍເງິນມີຄ່າໜຶ່ງຮ້ອຍຕະລັນຕົນ ແລະຄຳຮ້ອຍຕະລັນຕົນ [27]ຂາມຄຳຊາວໜ່ວຍມີຄ່າ
ໜຶ່ງພັນ ດາຣິກ[ຂ] ແລະ ເຄື່ອງໃຊ້ທອງເຫລືອງ ເນື້ອລະອຽດ ສຸກໃສ ສອງໜ່ວຍ ມີຄ່າ ເທົ່າກັບຄຳ
[28]ຂ້າພະເຈົ້າບອກພວກເຂົາວ່າ "ທ່ານທັງຫລາຍບໍລິສຸດຕໍ່ ພຣະຜູ້ເປັນເຈົ້າ ແລະເຄື່ອງໃຊ້ກໍບໍລິ-
ສຸດ ແລະເງິນກັບຄຳເປັນຂອງຖວາຍດ້ວຍໃຈສະໝັກແດ່ ພຣະຜູ້ເປັນເຈົ້າ ພຣະເຈົ້າ ແຫ່ງບັນພະ-
ບູລຸດຂອງທ່ານທັງຫລາຍ [29]ຈົ່ງ ເຝົ້າ ເບິ່ງ ໄວ້ຈົນກວ່າທ່ານຊັ່ງສິ່ງ ເຫລົ່ານັ້ນຕໍ່ໜ້າພວກປະໂລຫິດ
ໃຫຍ່ ແລະຄົນ ເລວີ ກັບຫົວໜ້າຂອງຕະກູນ ອິສຣາເອນ ໃນ ເຢຣູຊາເລັມ ພາຍໃນຫ້ອງພຣະວິ-
ຫານຂອງ ພຣະຜູ້ເປັນເຈົ້າ"

[30]ບັນດາປະໂລຫິດ ແລະຄົນ ເລວີ ຈຶ່ງຮັບເງິນ ແລະຄຳທີ່ໄດ້ຊັ່ງ ກັບເຄື່ອງໃຊ້ ເພື່ອນຳໄປຍັງ
ເຢຣູຊາເລັມ ໃນພຣະວິຫານຂອງ ພຣະເຈົ້າ ຂອງເຮົາ

## ເອັດຊະຣາເຖິງເຢຣູຊາເລັມ

[31]ແລ້ວເຮົາກໍອອກຈາກແມ່ນໍ້າ ອາຮາວາ ໃນວັນທີສິບສອງຂອງເດືອນຕົ້ນ ເພື່ອໄປຍັງ ເຢຣູຊາ-

[ກ]ໜຶ່ງຕະລັນຕົນ ຄື 3.4 ກິໂລ (kg) [ຂ]ໜຶ່ງພັນດາຣິກ ຄື 8.4 ກິໂລ (kg)

ເລັມ ແລະພຣະຫັດຂອງພຣະເຈົ້າຂອງເຮົາຢູ່ກັບເຮົາ ພຣະອົງໄດ້ຊ່ວຍເຮົາໃຫ້ພົ້ນຈາກມືຂອງ
ສັດຕູ ຈາກພວກດັກຊຸ້ມຄອຍຖ້າຢູ່ຕາມທາງ [32]ເຮົາມາເຖິງເຢຣູຊາເລັມ ແລະພັກຢູ່ບ່ອນນັ້ນ
ສາມມື້ [33]ໃນວັນທີສີ່ພາຍໃນພຣະວິຫານຂອງພຣະເຈົ້າຂອງເຮົາ ກໍຊັ່ງເງິນຄຳ ແລະເຄື່ອງໃຊ້
ໃສ່ມືຂອງເມເຣໂມດປະໂລຫິດ ລູກຊາຍອູຣີຢາ ແລະຄົນທີ່ຢູ່ກັບພວກເຂົາຄືເອເລອາຊາລູກ
ຊາຍຟີເນຮາດ ແລະຄົນທີ່ຢູ່ກັບພວກເຂົາທັງຫລາຍຄື ໂຢຊາບັດ ລູກຊາຍເຢຊູອາ ແລະໂນ-
ອາດີຢາລູກຊາຍບິນນຸຍ ຄົນເລວີ [34]ພວກເຂົາຊັ່ງ ແລະນັບທັງໝົດ ແລ້ວບັນທຶກນໍ້າໜັກຂອງ
ທຸກສິ່ງໄວ້

[35]ບັນດາລູກຫລານຂອງພວກທີ່ຖືກກວາດໄປເປັນຊະເລີຍ ຊຶ່ງໄດ້ກັບມາຈາກການເປັນຊະ-
ເລີຍ ໄດ້ຖວາຍເຄື່ອງເຜົາບູຊາແດ່ພຣະເຈົ້າແຫ່ງອິສຣາເອນ ມີງົວເຖິກສິບສອງໂຕສຳລັບພວກ
ອິສຣາເອນທັງປວງ ແກະຜູ້ເກົ້າສິບຫົກໂຕ ລູກແກະເຈັດສິບເຈັດໂຕ ແລະແບ້ຜູ້ສິບສອງໂຕ
ເປັນເຄື່ອງບູຊາໄຖ່ບາບ ທັງໝົດນີ້ເປັນເຄື່ອງເຜົາບູຊາຖວາຍພຣະຜູ້ເປັນເຈົ້າ

## ພວກເຂົາມອບພະລາຊະອົງການໃຫ້ແກ່ຜູ້ປົກຄອງ

[36]ພວກເຂົາທັງຫລາຍໄດ້ມອບພະລາຊະອົງການໃຫ້ແກ່ຜູ້ປົກຄອງ ແລະຂ້າລາຊະການຂອງ
ກະສັດ ຟາກແມ່ນໍ້າຕາເວັນຕົກ ແລະພວກເພິ່ນເຫລົ່ານີ້ໄດ້ຊ່ວຍເຫລືອປະຊາຊົນ ກັບພຣະວິ-
ຫານຂອງພຣະເຈົ້າ

# ບົດທີ 9

## ການແຕ່ງງານກັບຊົນຊາດທີ່ບໍ່ເຊື່ອພຣະເຈົ້າເປັນສິ່ງທີ່ຜິດ

[1]ພາຍຫລັງເຫດການເຫລົ່ານີ້ ເຈົ້າໜ້າທີ່ກໍເຂົ້າມາຫາຂ້າພະເຈົ້າ ກ່າວວ່າ "ຊົນຊາດອິສຣາ-
ເອນ ແລະບັນດາປະໂລຫິດກັບຄົນເລວີບໍ່ໄດ້ແຍກຕົນອອກຈາກຊົນຊາດທັງຫລາຍແຫ່ງແຜ່ນ-
ດິນເຫລົ່ານັ້ນ ກັບການໜ້າກຽດຊັງຂອງພວກເຂົາເລີຍ ຄືຈາກຄົນການາອານ ຄົນຮິດຕີ ຄົນ
ເປຣິຊີ ຄົນເຢບຸດ ຄົນອຳໂມນ ຄົນໂມອາບ ຄົນເອຢິບ ແລະຄົນອະໂມຣິດ [2]ເພາະພວກເຂົາ
ຮັບລູກສາວຂອງຊົນຊາດເຫລົ່ານີ້ເປັນເມຍຂອງຕົນເອງ ແລະຂອງລູກຊາຍ ດັ່ງນັ້ນ ເຊື້ອສາຍ
ບໍລິສຸດໄດ້ປະປົນກັບຊົນຊາດທັງຫລາຍຂອງແຜ່ນດິນເຫລົ່ານັ້ນ ໃນການລະເມີດຂໍ້ນີ້ ມືຂອງເຈົ້າ
ໜ້າທີ່ຊັ້ນຫົວໜ້າ ແລະຜູ້ປົກຄອງເມືອງແມ່ນເດັ່ນທີ່ສຸດ"

[3]ເມື່ອຂ້າພະເຈົ້າໄດ້ຍິນຢ່າງນີ້ ຂ້າພະເຈົ້າກໍຈີກເສື້ອຂອງຂ້າພະເຈົ້າ ທັງເສື້ອຄຸມຂອງຂ້າພະ-
ເຈົ້າ ແລະຕັດຜົມອອກຈາກຫົວຂອງຂ້າພະເຈົ້າ ທັງແຖໜວດເຄົາ ແລະນັ່ງລົງຕົກໃຈຢູ່ [4]ແລ້ວ
ບັນດາຄົນທີ່ສັ່ນສະທ້ານໄປດ້ວຍພຣະທຳຂອງພຣະເຈົ້າແຫ່ງອິສຣາເອນ ເຫດຍ້ອນການລະ-
ເມີດຂອງພວກທີ່ຖືກກວາດໄປເປັນຊະເລີຍນັ້ນ ໄດ້ມາປະຊຸມຕໍ່ໜ້າຂ້າພະເຈົ້າ ເມື່ອຂ້າພະເຈົ້າ
ນັ່ງຕົກໃຈຢູ່ຈົນຮອດເວລາຖວາຍເຄື່ອງຖວາຍບູຊາໃນຕອນແລງ

## ຄຳອະທິຖານ ແລະການສາລະພາບຂອງເອັດຊະຣາ

[5]ໃນເວລາຖວາຍບູຊາຕອນແລງນັ້ນ ຂ້າພະເຈົ້າໄດ້ລຸກຂຶ້ນຈາກການຖ່ອມຕົວ ມີເຄື່ອງແຕ່ງ
ກາຍ ແລະເສື້ອຄຸມຂອງຂ້າພະເຈົ້າຈີກຂາດ ແລ້ວຂ້າພະເຈົ້າກໍຄຸເຂົ່າລົງ ຍົກມືຂຶ້ນຕໍ່ພຣະຜູ້-

ເປັນເຈົ້າພຣະເຈົ້າຂອງຂ້າພະເຈົ້າ [6]ຂ້າພະເຈົ້າທູນວ່າ "ຂ້າແດ່ພຣະເຈົ້າຂອງຂ້າພຣະອົງ ຂ້າ-
ພະອົງອັບອາຍບໍ່ກ້າທີ່ຈະເງີຍໜ້າຫາພຣະອົງ ພຣະເຈົ້າຂອງຂ້າພະອົງ ເພາະວ່າຄວາມຊົ່ວຊ້າ
ຂອງຂ້າພະອົງທັງຫລາຍຂຶ້ນສູງກວ່າຫົວຂອງຂ້າພະອົງ ແລະການລະເມີດຂອງຂ້າພະອົງທັງ-
ຫລາຍກໍກອງຂຶ້ນໄປເຖິງຟ້າສະຫວັນ

[7]ຂ້າພະອົງທັງຫລາຍມີການລະເມີດຍິ່ງໃຫຍ່ຕັ້ງແຕ່ສະໄໝບັນພະບູລຸດຂອງຂ້າພະອົງຈົນເຖິງ
ທຸກມື້ນີ້ ແລະຍ້ອນຄວາມຊົ່ວຊ້າຂອງຂ້າພະອົງທັງຫລາຍ ຂ້າພະອົງທັງຫລາຍ ທັງບັນດາກະ-
ສັດຂອງຂ້າພະອົງ ແລະບັນດາປະໂລຫິດຂອງຂ້າພະອົງໄດ້ຖືກມອບໄວ້ໃນມືຂອງບັນດາກະສັດ
ແຫ່ງແຜ່ນດິນເຫລົ່ານັ້ນ ໃຫ້ແກ່ດາບ ແກ່ການເປັນຊະເລີຍ ແກ່ການປຸ້ນ ແລະແກ່ການຂາຍໜ້າ
ຢ່າງທີ່ສຸດ ຢ່າງທຸກມື້ນີ້

[8]ແຕ່ບັດນີ້ ພຣະຜູ້ເປັນເຈົ້າພຣະເຈົ້າຂອງຂ້າພະອົງທັງຫລາຍໄດ້ສະແດງພຣະກະລຸນາຊົ່ວ-
ຄາວໜຶ່ງສັ້ນໆ ແລະໄດ້ປະທານໃຫ້ຂ້າພະອົງທັງຫລາຍມີຄົນທີ່ເຫລືອຢູ່ແລະມີບ່ອນຍຶດໝັ້ນໃນ
ບ່ອນບໍລິສຸດຂອງພຣະອົງ ເພື່ອວ່າພຣະເຈົ້າຂອງຂ້າພະອົງຈະໄດ້ໃຫ້ຕາຂອງຂ້າພະອົງທັງ-
ຫລາຍແຈ້ງຂຶ້ນ ແລະໄດ້ປະທານຄວາມພົ້ນຈາກການເປັນຂ້າທາດຂອງຂ້າພະອົງທັງຫລາຍ
[9]ເພາະວ່າຂ້າພະອົງທັງຫລາຍເປັນຂ້າທາດ ແຕ່ພຣະເຈົ້າຂອງຂ້າພະອົງບໍ່ໄດ້ປະຖິ້ມຂ້າພະອົງ
ໄວ້ໃນການເປັນຂ້າທາດ ແຕ່ໄດ້ບັນດານໃຫ້ຂ້າພະອົງທັງຫລາຍໄດ້ຮັບຄວາມເມດຕາໃນສາຍ
ພະເນດບັນດາກະສັດແຫ່ງເປີເຊຍ ໄດ້ປະທານການຟື້ນຟູແກ່ຂ້າພະອົງທັງຫລາຍນຳເພື່ອຈະຕັ້ງ
ພຣະວິຫານແຫ່ງພຣະເຈົ້າຂອງຂ້າພະອົງທັງຫລາຍຂຶ້ນໄວ້ ເພື່ອຈະສ້ອມແປງສິ່ງທີ່ມ້າງເພແລ້ວ
ເພື່ອຈະປະທານກຳແພງແກ່ຂ້າພະອົງທັງຫລາຍໃນຢູດາ ແລະໃນເຢຣູຊາເລັມ

[10]ແລະບັດນີ້ ຂ້າແດ່ພຣະເຈົ້າຂອງຂ້າພະອົງທັງຫລາຍ ຕໍ່ຈາກນີ້ຂ້າພະອົງຈະທູນຫຍັງອີກ
ເພາະຂ້າພະອົງທັງຫລາຍໄດ້ປະຖິ້ມພຣະບັນຍັດຂອງພຣະອົງ [11]ຊຶ່ງພຣະອົງໄດ້ບັນຊາໄວ້ໂດຍຜູ້
ປະກາດພຣະທຳ ຜູ້ຮັບໃຊ້ຂອງພຣະອົງວ່າ 'ແຜ່ນດິນຊຶ່ງເຈົ້າກຳລັງເຂົ້າໄປເພື່ອຍຶດເປັນກຳມະ-
ສິດນັ້ນ ເປັນແຜ່ນດິນມົນທິນ ດ້ວຍເຫດຄວາມເປັນມົນທິນຂອງຊົນຊາດທັງຫລາຍແຫ່ງແຜ່ນດິນ
ເຫລົ່ານັ້ນ ຍ້ອນການໜ້າກຽດຊັງຂອງພວກເຂົາ ຊຶ່ງເຕັມໄປດ້ວຍມົນທິນຂອງພວກເຂົາທັງ-
ຫລາຍ [12]ເພາະສະນັ້ນ ຢ່າມອບພວກລູກສາວຂອງເຈົ້າແກ່ພວກລູກຊາຍຂອງພວກເຂົາ ຫລືຢ່າ
ຮັບພວກລູກສາວຂອງພວກເຂົາໃຫ້ພວກລູກຊາຍຂອງເຈົ້າ ຫລືຢ່າເສີມສັນຕິພາບ ແລະຄວາມ
ຈະເລີນຮັ່ງມີຂອງພວກເຂົາທັງຫລາຍ ເພື່ອເຈົ້າທັງຫລາຍຈະແຂງແຮງ ແລະກິນຂອງດີໆແຫ່ງ
ແຜ່ນດິນນັ້ນ ແລະມອບແຜ່ນດິນນັ້ນໄວ້ເປັນມໍລະດົກແກ່ລູກຫລານຂອງເຈົ້າທັງຫລາຍ'

[13]ເມື່ອຂ້າພະອົງທັງຫລາຍຮັບໂທດເພາະການຊົ່ວຮ້າຍຂອງຂ້າພະອົງ ແລະເພາະການລະ-
ເມີດອັນໃຫຍ່ຂອງຂ້າພະອົງ ແລະເມື່ອພຣະອົງຄືພຣະເຈົ້າຂອງຂ້າພະອົງທັງຫລາຍໄດ້ລົງໂທດ
ຂ້າພະອົງ ເຫດຍ້ອນຄວາມຊົ່ວຊ້າຂອງຂ້າພະອົງ ນ້ອຍກວ່າສິ່ງທີ່ສົມຄວນໄດ້ຮັບ ທັງໄດ້ປະ-
ທານການຊ່ວຍໃຫ້ພົ້ນແກ່ຂ້າພະອົງທັງຫລາຍຢ່າງນີ້ [14]ສົມຄວນທີ່ຂ້າພະອົງທັງຫລາຍຈະຫັກ
ພຣະບັນຍັດຂອງພຣະອົງອີກ ແລະເຂົ້າແຕ່ງງານກັບຊົນຊາດທັງຫລາຍຜູ້ປະພຶດສິ່ງໜ້າກຽດຊັງ
ເຫລົ່ານີ້ຫລື ພຣະອົງຈະບໍ່ໄດ້ໂກດຮ້າຍຕໍ່ຂ້າພະອົງທັງຫລາຍຈົນພຣະອົງທຳລາຍຂ້າພະອົງທັງ-

ຫລາຍເສຍ ຈົນບໍ່ມີຄົນທີ່ເຫລືອຢູ່ ແລະບໍ່ມີໃຜລອດພົ້ນໄດ້ຫລື 15ຂ້າແດ່ພຣະຜູ້ເປັນເຈົ້າພຣະ-
ເຈົ້າ ແຫ່ງ ອິສຣາເອນ ພຣະອົງຊອບທຳ ເພາະຂ້າພະອົງທັງຫລາຍເປັນຄົນທີ່ເຫລືອຢູ່ຊຶ່ງລອດ
ພົ້ນມາຢ່າງທຸກມື້ນີ້ ເບິ່ງແມ ຂ້າພະອົງທັງຫລາຍຢູ່ຕໍ່ພຣະພັກພຣະອົງ ມີການລະເມີດຂອງຂ້າ
ພຣະອົງຢູ່ເພາະບໍ່ມີຈັກຄົນດຽວທີ່ຈະຢືນຕໍ່ພຣະພັກພຣະອົງໄດ້”

# ບົດທີ 10

## ຄົນຂອງພຣະເຈົ້າແຍກອອກຈາກຊາວໂລກ

1ຂະນະທີ່ ເອັດຊະຣາ ອະທິຖານ ທັງຮ້ອງໄຫ້ ແລະສາລະພາບຕໍ່ໜ້າພຣະວິຫານຂອງ ພຣະ-
ເຈົ້າ ມີຊຸມນຸມຊົນໝູ່ໃຫຍ່ທັງຊາຍຍິງ ແລະເດັກນ້ອຍຈາກ ອິສຣາເອນ ປະຊຸມຕໍ່ໜ້າເພິ່ນ ເພາະ
ປະຊາຊົນໄດ້ຮ້ອງໄຫ້ຢ່າງຂົມຂື່ນ 2ແລ້ວ ເຊການີອາ ລູກຊາຍ ເຢຮີເອນ ຕະກູນ ເອລາມ ກ່າວແກ່
ເອັດຊະຣາ ວ່າ “ພວກເຮົາທັງຫລາຍໄດ້ລະເມີດຕໍ່ ພຣະເຈົ້າ ຂອງ ເຮົາ ເສຍແລ້ວ ແລະໄດ້ແຕ່ງ-
ງານກັບຍິງຕ່າງຊາດຈາກຊົນຊາດທັງຫລາຍຂອງແຜ່ນດິນນີ້ ແຕ່ເຖິງຈະມີເລື່ອງຢ່າງນີ້ ກໍຍັງມີ
ຄວາມຫວັງໃນ ອິສຣາເອນ ຢູ່

3ເພາະສະນັ້ນ ໃຫ້ເຮົາເຮັດຄຳໝັ້ນສັນຍາກັບ ພຣະເຈົ້າ ຂອງ ເຮົາທີ່ຈະຖິ້ມເມຍ ແລະລູກເຫລົ່າ
ນີ້ ຊຶ່ງເກີດມາຈາກພວກເຂົາທັງຫລາຍ ຕາມຄຳປຶກສາຂອງເຈົ້ານາຍຂອງຂ້າພະເຈົ້າ ແລະຂອງ
ບັນດາຜູ້ທີ່ສັ່ນສະທ້ານດ້ວຍພຣະບັນຍັດຂອງ ພຣະເຈົ້າ ຂອງ ເຮົາທັງຫລາຍ ແລະຂໍໃຫ້ເຮັດຕາມ
ກົດໝາຍສາ 4ຈົ່ງລຸກຂຶ້ນ ເພາະເປັນໜ້າທີ່ຂອງທ່ານ ແລະເຮົາທັງຫລາຍຈະສະໜັບສະໜູນ
ທ່ານ ຂໍຈົ່ງເຂັ້ມແຂງ ແລະເຮັດເຖີດ”

5ແລ້ວ ເອັດຊະຣາ ໄດ້ລຸກຂຶ້ນໃຫ້ບັນດາປະໂລຫິດໃຫຍ່ແລະ ເລວີ ກັບ ອິສຣາເອນ ທັງປວງເຮັດ
ຄຳສາບານວ່າ ຕົນຈະເຮັດຕາມທີ່ໄດ້ເວົ້າແລ້ວ ພວກເຂົາທັງຫລາຍຈຶ່ງເຮັດຄຳສາບານ 6ແລ້ວ
ເອັດຊະຣາ ກໍຖອຍອອກຈາກໜ້າພຣະວິຫານຂອງ ພຣະເຈົ້າ ເຂົ້າໄປໃນຫ້ອງຂອງ ເຢໂຮຮານັນ
ລູກຊາຍ ເອລີຢາຊິບ ເມື່ອມາເຖິງບ່ອນນັ້ນແລ້ວກໍບໍ່ຮັບປະທານເຂົ້າຈີ່ ຫລືດື່ມນ້ຳ ເພາະເພິ່ນ
ໂສກເສົ້າຍ້ອນເລື່ອງການລະເມີດຂອງພວກທີ່ຖືກກວາດໄປເປັນຊະເລີຍນັ້ນ

7ພວກເຂົາປະກາດທົ່ວ ຢູດາ ແລະ ເຢຣູຊາເລັມ ແກ່ລູກຫລານທັງໝົດຂອງພວກທີ່ຖືກກວາດ
ໄປເປັນຊະເລີຍວ່າ ໃຫ້ມາຊຸມນຸມກັນທີ່ ເຢຣູຊາເລັມ 8ແລະຖ້າຜູ້ໃດບໍ່ມາພາຍໃນສາມມື້ ຕາມຄຳ
ສັ່ງຂອງເຈົ້າໜ້າທີ່ ແລະພວກຜູ້ໃຫຍ່ທັງຫລາຍ ຈະຕ້ອງຢຶດຊັບສົມບັດຂອງພວກເຂົາທັງໝົດ
ແລະຜູ້ນັ້ນຕ້ອງຕັດຂາດຈາກຊຸມນຸມຊົນຂອງພວກທີ່ຖືກກວາດໄປເປັນຊະເລີຍ

9ຜູ້ຊາຍທັງປວງຂອງ ຢູດາ ແລະ ເບັນຢາມິນ ໄດ້ຊຸມນຸມກັນທີ່ ເຢຣູຊາເລັມ ພາຍໃນສາມມື້ ໃນ
ເດືອນທີເກົ້າ ໃນວັນທີຊາວຂອງເດືອນນັ້ນ ແລະປະຊາຊົນທັງປວງນັ່ງຢູ່ທີ່ຖະໜົນໜ້າພຣະວິ-
ຫານຂອງ ພຣະເຈົ້າ ຕົວສັ່ນສະທ້ານດ້ວຍເລື່ອງນີ້ ແລະດ້ວຍເລື່ອງຝົນຕົກໜັກ

10ເອັດຊະຣາ ໄດ້ລຸກຂຶ້ນເວົ້າກັບພວກເຂົາວ່າ “ທ່ານທັງຫລາຍໄດ້ລະເມີດ ແລະໄດ້ແຕ່ງງານ
ກັບຍິງຕ່າງຊາດ ຈຶ່ງໄດ້ທະວີການລະເມີດຂອງ ອິສຣາເອນ 11ເຫດສະນັ້ນບັດນີ້ ຈົ່ງສາລະພາບ
ຕໍ່ ພຣະຜູ້ເປັນເຈົ້າ ພຣະເຈົ້າ ແຫ່ງບັນພະບູລຸດຂອງທ່ານ ແລະເຮັດຕາມນ້ຳພຣະໄທຂອງພຣະອົງ

ຈຶ່ງແຍກຕົວທ່ານອອກຈາກຊົນຊາດທັງຫລາຍແຫ່ງແຜ່ນດິນ ແລະຈາກເມຍຕ່າງຊາດ"
[12]ແລ້ວຊຸມນຸມຊົນທັງໝົດໄດ້ຕອບດ້ວຍສຽງອັນດັງວ່າ "ເປັນດັ່ງນັ້ນແທລະ ເຮົາຕ້ອງເຮັດ
ຕາມທີ່ທ່ານເວົ້າແລ້ວ" [13]ແຕ່ມີປະຊາຊົນຫລາຍ ແລະເປັນເວລາທີ່ຝົນຕົກໜັກ ເຮົາຢູ່ກາງແຈ້ງບໍ່
ໄຫວ ແລະຈະຈັດໃຫ້ສຳເລັດໃນມື້ໜຶ່ງສອງມື້ກໍບໍ່ໄດ້ ເພາະເຮົາໄດ້ລະເມີດໃນເລື່ອງນີ້ຫລາຍ
[14]ຂໍໃຫ້ເຈົ້າໜ້າທີ່ຂອງເຮົາກະທຳການແທນຊຸມນຸມຊົນທັງໝົດ ແລະໃຫ້ບັນດາຄົນໃນຫົວເມືອງ
ຂອງເຮົາທີ່ໄດ້ຮັບເມຍຕ່າງຊາດມາຕາມເວລາກຳນົດພ້ອມກັບພວກຜູ້ໃຫຍ່ ແລະຜູ້ຕັດສິນຂອງ
ທຸກເມືອງຈົນກວ່າພຣະພິໂລດອັນແຮງກ້າຂອງພຣະເຈົ້າຂອງເຮົາ ທີ່ມີໃນເລື່ອງນີ້ຫັນເຫໄປຈາກ
ເຮົາທັງຫລາຍ"
[15]ໂຢນາທານ ລູກຊາຍ ອາສາເຮນ ແລະຢາເຊຢາ ລູກຊາຍ ຕິກວາ ເທົ່ານັ້ນທີ່ຄັດຄ້ານເລື່ອງນີ້
ແລະ ເມຊຸນລຳ ກັບ ຊັບເບທາຍ ຄົນ ເລວີ ສະໜັບສະໜູນພວກເຂົາທັງສອງ [16]ແລ້ວລູກຫລານ
ຂອງພວກທີ່ຖືກກວາດໄປເປັນຊະເລີຍກໍໄດ້ເຮັດຕາມ ເອັດຊະຣາ ແລະຫົວໜ້າຂອງຕະກູນບາງ
ຄົນ ຕາມຕະກູນຂອງພວກເຂົາ ແຕ່ລະຄົນທີ່ລະບຸຊື່ໄວ້ໄດ້ຖືກເລືອກ ໃນວັນທີໜຶ່ງຂອງເດືອນທີ
ສິບ ພວກເຂົານັ່ງປະຊຸມກັນຕັດສິນເລື່ອງນີ້ [17]ເມື່ອຮອດວັນທີໜຶ່ງຂອງເດືອນທີໜຶ່ງ ພວກເຂົາກໍ
ຈົບເລື່ອງທີ່ຊາຍທັງປວງໄດ້ແຕ່ງງານກັບຍິງຕ່າງຊາດ
[18]ເຊື້ອສາຍຂອງປະໂລຫິດຜູ້ໄດ້ແຕ່ງງານກັບຍິງຕ່າງຊາດ:
ຈາກເຊື້ອສາຍ ເຢຊູອາ ລູກຊາຍ ເຢໂຮຊາດັກ ແລະພີ່ນ້ອງຂອງເພິ່ນມີມາອາເສຢາ ເອລີເອ-
ເຊຢາຣິບ ແລະ ເກດາລີຢາ [19]ພວກເຂົາປະຕິຍານຕົນວ່າຈະຖິ້ມເມຍຂອງຕົນ
ເພາະພວກເຂົາມີຄວາມຜິດ
ພວກເຂົາຈຶ່ງຖວາຍແກະຜູ້ໂຕໜຶ່ງຈາກຝູງແບ້ແກະເປັນເຄື່ອງບູຊາ
ເພາະເຫດການລະເມີດນັ້ນ
[20] ຈາກຕະກູນ ອິມເມ ມີຮານານີ ແລະ ເຊບາດີຢາ
[21] ຈາກຕະກູນ ຮາຣິມ ມີມາອາເສຢາ ເອລີຢາ ເຊມາຢາ ເຢຮີເອນ ແລະ ອຸດຊີຢາ
[22] ຈາກຕະກູນ ປັດຊູ ມີເອລີໂອນາຍ ມາອາເສຢາ ອິດຊະມາເອນ ເນທາເນນ ໂຢຊາບັດ ແລະ
ເອລາສາ
[23] ຈາກພວກຄົນ ເລວີ ມີໂຢຊາບັດຊີເມອີ ເກລາຢາ (ຄື ເກລີຕາ) ເປທາຮີຢາຢູດາ ແລະ ເອລີເອ-
ເຊ
[24] ຈາກພວກນັກຮ້ອງ ມີເອລີຢາຊິບ
ຈາກຄົນເຝົ້າປະຕູ ມີຊານລູມ ເຕເລັມ ແລະ ອູຣີ
[25] ແລະຈາກພວກ ອິສຣາເອນ ຄືຈາກຄົນ ປາໂຣດ ມີຣາມີຢາ ອິດຊີຢາ ມັນກີຢາ ມີຢາມິນ ເອເລ-
ອາຊາ ມັນກີຢາ ແລະ ເບນາຢາ
[26] ຈາກຕະກູນ ເອລາມ ຄືມັດຕານີຢາ ເຊຄາຣີຢາ ເຢຮີເອນ ອັບດີ ເຢເຣໂມດ ເອລີຢາ
[27] ຈາກຕະກູນ ຊັດຕຸ ມີເອລີໂອນາຍ ເອລີຢາຊິບ ມັດຕານີຢາ ເຢເຣໂມດ ຊາບາດ ແລະ ອາຊີຊາ
[28] ຈາກຕະກູນ ເບບາຍ ມີເຢໂຮຮານັນ ຮານານີຢາ ຊັບບາຍ ອັດລາຍ

[29] ຈາກຕະກູນ ບານີ ມີເມຊຸນລຳ ມັນລຸກ ອາດາຢາ ຢາຊຸບ ເຊອານ ແລະ ເຢເຣໂມດ
[30] ຈາກຕະກູນ ປາຮາດ ໂມອາບ ມີອັດນາ ເກລານ ເບນາຢາ ມາອາເສຢາ ມັດຕານີຢາ ເບຊາ-
ເລນ ບິນນຸຍ ແລະ ມານາເຊ
[31] ຈາກຕະກູນ ຮາຣິມ ມີເອລີເອເຊ ອິດຊີຢາ ມັນກີຢາ ເຊມາຢາ ຊີເມໂອນ [32]ເບັນຢາມິນ ມັນ-
ລຸກ ເຊມາຣີຢາ
[33] ຈາກຕະກູນ ຮາຊຸມ ມີມັດເຕນາຍ ມັດຕາຕາ ຊາບາດ ເອລີເຟເລັດ ເຢເຣມາຍ ມານາເຊ ແລະ
ຊີເມອີ
[34] ຈາກຕະກູນ ບານີ ມີມາອາດາຍ ອຳຣາມ ອູເອນ [35]ເບນາຢາ ເບເດຢາ ເກລູຮີ [36]ວານີຢາ ເມ-
ເຣໂມດ ເອລີຢາຊິບ [37]ມັດຕານີຢາ ມັດເຕນາຍ ຢາອາສູ
[38] ບານີ ບິນນຸຍ ຊີເມອີ [39]ເຊເລມີຢາ ນາທານ ອາດາຢາ [40]ມັກນາເດບາຍ ຊາຊາຍ ຊາຣາຍ
[41]ອັດຊາເຣນ ເຊເລມີຢາ ເຊມາຣີຢາ [42]ຊານລູມ ອາມາຣີຢາ ແລະ ໂຢເຊັບ
[43] ຈາກຕະກູນ ເນໂບ ມີເຢອີເອນ ມັດຕີທີຢາ ຊາບາດ ເຊບີນາ ອິດໂດ ໂຢເອນ ແລະ ເບນາຢາ
[44]ທຸກຕະກູນເຫລົ່ານີ້ໄດ້ແຕ່ງງານກັບຍິງຕ່າງຊາດ ບາງຄົນມີລູກເກີດຈາກເມຍເຫລົ່ານັ້ນດ້ວຍ

* * *

# ເນເຮມີຢາ

## ບົດທີ 1

### ເນເຮມີຢາອະທິຖານ

### ພີ່ນ້ອງຂອງເນເຮມີຢາລາຍງານເລື່ອງຄວາມທຸກໃຈໃນເຢຣູຊາເລັມ

1ຖ້ອຍຄຳຂອງ ເນເຮມີຢາ ລູກຊາຍ ຮາກາລີຢາ ຢູ່ມາໃນເດືອນເກົ້າ ປີທີ່ຊາວຂອງການປົກ-
ຄອງຂອງເຈົ້າອາຕາເຊເຊັດ ຂະນະທີ່ຂ້າພະເຈົ້າຢູ່ໃນຊູຊາ ເມືອງຫຼວງ
2ຮານານີ ພີ່ນ້ອງຂອງຂ້າພະເຈົ້າຄົນໜຶ່ງທີ່ມາຈາກຢູດາກັບຊາຍບາງຄົນ ຂ້າພະເຈົ້າໄດ້ສອບ
ຖາມເຖິງພວກຢິວທີ່ໄດ້ໜີຈາກພວກທີ່ຖືກກວາດໄປເປັນຊະເລີຍ ແລະຖາມກ່ຽວກັບ ເຢຣູຊາເລັມ
3ພວກ ເຂົາ ເວົ້າກັບ ຂ້າພະ ເຈົ້າວ່າ "ຜູ້ທີ່ໜີ ຈາກພວກທີ່ຖືກກວາດ ໄປ ເປັນ ຊະເລີຍ ຊຶ່ງຢູ່ໃນ
ທ້ອງຖິ່ນ ເດີມມີຄວາມລຳບາກຢ່າງຫຼວງຫລາຍ ແລະມີຄວາມອັບອາຍ. ກຳແພງ ເມືອງ ເຢຣູຊາ-
ເລັມ ກໍເພພັງລົງ ແລະ ປະຕູເມືອງກໍຖືກໄຟທຳລາຍ"
4ຢູ່ມາ ເມື່ອ ຂ້າພະ ເຈົ້າ ໄດ້ຍິນ ຖ້ອຍຄຳ ເຫຼົ່ານີ້ ຂ້າພະ ເຈົ້າກໍນັ່ງລົງຮ້ອງໄຫ້ ແລະ ໂສກເສົ້າຢູ່
ຫຼາຍມື້ ຂ້າພະ ເຈົ້າອົດອາຫານ ແລະອະທິຖານຕໍ່ພຣະພັກ ພຣະເຈົ້າ ແຫ່ງຟ້າສະຫວັນ

### ເນເຮມີຢາເສຍໃຈ ຈຶ່ງອະທິຖານ

5ຂ້າພະເຈົ້າທູນວ່າ "ຂ້າແດ່ ພຣະຜູ້ເປັນເຈົ້າ ພຣະເຈົ້າ ແຫ່ງຟ້າສະຫວັນອົງທີ່ຍິ່ງໃຫຍ່ ແລະ
ເປັນທີ່ຢຳເກງ ພຣະອົງຊົງຮັກສາພັນທະສັນຍາ ແລະເມດຕາຕໍ່ບັນດາຜູ້ທີ່ຮັກພຣະອົງ ແລະຜູ້ທີ່
ຮັກສາພຣະບັນຍັດຂອງພຣະອົງ 6ຂໍພຣະກັນຂອງພຣະອົງສະດັບຮັບຟັງ ແລະຂໍພຣະເນດຂອງ
ພຣະອົງຊົງ ເຝົ້າ ເບິ່ງ ເພື່ອຈະ ຮັບຟັງຄຳອະທິຖານ ຂອງຜູ້ຮັບ ໃຊ້ຂອງພຣະອົງ ຊຶ່ງຂ້າພະອົງ
ອ້ອນວອນຕໍ່ພຣະພັກຂອງພຣະອົງທັງກາງເວັນ ແລະກາງຄືນ ເພື່ອປະຊາຊົນ ອິສຣາເອນ ຜູ້ຮັບ
ໃຊ້ຂອງພຣະອົງ ຂໍຍອມສາລະພາບບາບຂອງປະຊາຊົນ ອິສຣາເອນ ຊຶ່ງຂ້າພະອົງທັງຫຼາຍໄດ້
ກະທຳບາບ ຕໍ່ສູ້ພຣະອົງ ດ້ວຍວ່າ ຂ້າພະອົງ ແລະ ຄອບຄົວ ບັນພະບູລຸດ ຂອງ ຂ້າພະອົງ ໄດ້ ເຮັດ
ບາບ ແລ້ວ 7ຂ້າພະອົງ ທັງຫຼາຍ ປະພຶດຢ່າງ ຊົ່ວຊ້າຕໍ່ພຣະອົງ ແລະ ບໍ່ໄດ້ຖືຮັກສາພຣະບັນຍັດ
ແລະຄຳຕັດສິນ ຊຶ່ງພຣະອົງໄດ້ສັ່ງແກ່ໂມເຊຜູ້ຮັບໃຊ້ຂອງພຣະອົງ 8ຂໍພຣະອົງລະນຶກເຖິງພຣະ-
ຄຳທີ່ພຣະອົງໄດ້ສັ່ງໄວ້ກັບ ໂມເຊ ຜູ້ຮັບໃຊ້ຂອງພຣະອົງວ່າ 'ຖ້າເຈົ້າທັງຫຼາຍກະທຳການລະເມີດ
ເຮົາຈະກະຈາຍ ເຈົ້າທັງຫຼາຍ ໄປ ໃນໝູ່ຊົນຊາດທັງຫຼາຍ 9ຖ້າ ເຈົ້າກັບ ມາຫາ ເຮົາ ແລະຖືຮັກສາ
ບັນຍັດຂອງ ເຮົາ ທັງປະຕິບັດຕາມ ເຖິງ ແມ່ນວ່າ ພວກເຈົ້າ ກະຈັດກະຈາຍໄປຢູ່ໄກແສນໄກ
ເຮົາຈະຮວບຮວມເຈົ້າມາຈາກບ່ອນນັ້ນ ແລະ ນຳເຈົ້າມາຍັງສະຖານທີ່ ຊຶ່ງເຮົາໄດ້ເລືອກໄວ້ເພື່ອ
ເຮັດໃຫ້ນາມຂອງ ເຮົາດຳລົງຢູ່ບ່ອນນັ້ນ' 10ພວກ ເຂົາ ເຫຼົ່ານີ້ ເປັນຜູ້ຮັບໃຊ້ ແລະ ເປັນປະຊາຊົນ
ຂອງພຣະອົງ ຜູ້ຊຶ່ງ ພຣະອົງ ໄດ້ ໄຖ່ໄວ້ດ້ວຍ ລິດທານຸພາບທີ່ຍິ່ງ ໃຫຍ່ຂອງພຣະອົງ ແລະດ້ວຍ
ພຣະຫັດອັນຊົງລິດຂອງພຣະອົງ
11ຂ້າ ແດ່ອົງ ພຣະຜູ້ເປັນເຈົ້າ ຂໍຊົງ ຫງ່ຽງ ພຣະກັນ ຮັບຟັງຄຳອະທິຖານ ຂອງຜູ້ຮັບ ໃຊ້ຂອງ

ພຣະອົງ ແລະຄຳ ອະທິຖານຂອງບັນດາຜູ້ຮັບໃຊ້ຂອງພຣະອົງ ຜູ້ຢຳເກງພຣະນາມຂອງພຣະ-
ອົງ ຂໍປະທານຄວາມສຳເລັດແກ່ຜູ້ຮັບໃຊ້ຂອງພຣະອົງໃນມື້ນີ້ ແລະຂໍຊົງໂຜດໃຫ້ເປັນທີ່ຖືກຕ້ອງ
ໃນສາຍຕາຂອງຊາຍຄົນນີ້ເທີ້ນ” ໃນຄາວນັ້ນ ຂ້າພະເຈົ້າເປັນຜູ້ຢາຍເຫລົ້າອະງຸ່ນປະຈຳໂຕະ
ເຈົ້າຊີວິດ

# ບົດທີ 2

## ເຈົ້າຊີວິດ ອາຕາເຊເຊັດສົ່ງເນເຣມີຢາໄປນະຄອນເຢຣູຊາເລັມ

1ໃນປີທີຊາວຂອງການຂຶ້ນສະເຫວີຍລາດຂອງເຈົ້າ ອາຕາເຊເຊັດ ໃນມື້ໜຶ່ງຂອງເດືອນໜຶ່ງ
ເມື່ອເຈົ້າຊີວິດຊົງສະເຫວີຍພະກາຍາຫານ ຂ້າພະເຈົ້າໄດ້ນຳເຫລົ້າອະງຸ່ນຖວາຍແດ່ພະອົງ ແຕ່
ກ່ອນພະອົງບໍ່ເຄີຍເຫັນຂ້າພະເຈົ້າໂສກເສົ້າເລີຍ. 2ພະອົງຊົງຖາມຂ້າພະເຈົ້າວ່າ, “ເປັນຫຍັງເຈົ້າ
ຈຶ່ງໂສກເສົ້າແທ້? ບໍ່ແມ່ນບໍ່ສະບາຍບໍ? ເຈົ້າອຸກໃຈຊື່ໆຕິ!”
3ຂ້າພະເຈົ້າຮູ້ສຶກຢ້ານທີ່ສຸດ ຈຶ່ງທູນຕອບພະອົງວ່າ, “ຂໍພະອົງຊົງພະຈະເລີນຕະຫລອດໄປ
ຈະບໍ່ໃຫ້ຂ້ານ້ອຍໂສກເສົ້າໄດ້ຢ່າງໃດ ໃນເມື່ອເມືອງບ່ອນທີ່ປູ່ຍ່າຕາຍາຍຂອງຂ້ານ້ອຍຖືກຝັງໄວ້
ຮ້າງເປົ່າ ແລະປະຕູເມືອງກໍຖືກທຳລາຍໝົດ.” 4ເຈົ້າຊີວິດຖາມວ່າ, “ເຈົ້າຕ້ອງການຫຍັງ?” ຂ້າ-
ພະເຈົ້າໄດ້ອ້ອນວອນຫາພຣະຜູ້ເປັນເຈົ້າ ຜູ້ຊົງປະທັບເທິງສະຫວັນຊັ້ນຟ້າ 5ແລ້ວຂ້າພະເຈົ້າຈຶ່ງ
ທູນຕໍ່ເຈົ້າຊີວິດວ່າ, “ຖ້າວ່າ ພະອົງຫາກຊົງພໍພະໄທ ແລະຊົງອະນຸຍາດຕາມຄຳຮ້ອງຂໍຂອງຂ້າ-
ນ້ອຍ ຂໍພະອົງຊົງໃຫ້ຂ້ານ້ອຍໄປປະເທດຢູດາ ຄື ໄປຍັງເມືອງບ່ອນທີ່ຝັງສົບພວກປູ່ຍ່າຕາຍາຍ
ຂອງຂ້ານ້ອຍ ເພື່ອວ່າຈະໃຫ້ສ້າງເມືອງນັ້ນຂຶ້ນໃໝ່.” 6ເຈົ້າຊີວິດພ້ອມທັງພະມະເຫສີທີ່ນັ່ງຄຽງ
ຂ້າງພະອົງ ໄດ້ຖາມຂ້າພະເຈົ້າວ່າ ຈະໄປດົນປານໃດ? ແລະເຫິງນານປານໃດຈຶ່ງຈະກັບມາ
ຂ້າພະເຈົ້າໄດ້ທູນຕອບພະອົງ ແລະພະອົງກໍໄດ້ຕົກລົງຕາມຄຳຮ້ອງຂໍ. 7ແລ້ວຂ້າພະເຈົ້າໄດ້ຮ້ອງ
ຂໍໃຫ້ເຈົ້າຊີວິດ ຊົງໂຜດກະລຸນາຂຽນພະລາຊະສານເຖິງພວກຜູ້ປົກຄອງທາງແຂວງເອຟຣາດ
ທິດຕາເວັນຕົກ ເພື່ອແນະນຳໃຫ້ພວກເພິ່ນອະນຸຍາດໃຫ້ຂ້າພະເຈົ້າເດີນທາງໄປເຖິງເມືອງຢູດາ.
8ຂ້າພະເຈົ້າໄດ້ຮ້ອງຂໍໃຫ້ພະອົງຂຽນພະລາຊະສານເຖິງ ອາສັບ ຜູ້ຮັກສາປ່າໄມ້ຂອງພະລາຊາ
ເພື່ອບອກໃຫ້ລາວຈັດສົ່ງໄມ້ສຳລັບສ້າງປະຕູປ້ອມຍາມຂອງພຣະວິຫານ ສຳລັບສ້າງກຳແພງ
ເມືອງ ແລະເຮືອນຢູ່ຂອງຂ້າພະເຈົ້າ ພຣະຜູ້ເປັນເຈົ້າຊົງຢູ່ກັບຂ້າພະເຈົ້າ. 9ເຈົ້າຊີວິດໄດ້ສັ່ງ
ນາຍທະຫານບາງຄົນ ແລະໝວດທະຫານມ້າໄປກັບຂ້າພະເຈົ້າ ແລ້ວຂ້າພະເຈົ້າກໍໄດ້ເດີນທາງ
ໄປສູ່ເອຟຣາດ ທາງທິດຕາເວັນຕົກ ເມື່ອໄປເຖິງ ຂ້າພະເຈົ້າກໍມອບພະລາຊະສານນັ້ນໃຫ້ພວກ
ຜູ້ປົກຄອງເມືອງ. 10ແຕ່ເມື່ອສັນບັນລັດ ຊາວເບັດໂຮໂຣນ ແລະໂຕບີຢາຂ້າລາຊະການຊາວ
ອຳໂມນຮູ້ຂ່າວວ່າ ມີຄົນມາເຮັດວຽກເພື່ອຫາຄວາມສຸກໃຫ້ແກ່ຊາວອິສຣາເອນ ພວກເຂົາກໍທຸກ
ໃຈຫລາຍ.

## ເນເຣມີຢາຊັກຊວນປະຊາຊົນໃຫ້ສ້າງກຳແພງຂຶ້ນໃໝ່

11ຕໍ່ມາ ຂ້າພະເຈົ້າໄດ້ຂຶ້ນໄປນະຄອນເຢຣູຊາເລັມ ແລະພັກຢູ່ທີ່ນັ້ນສາມມື້ ໂດຍບໍ່ໄດ້ບອກໃຫ້
ໃຜຮູ້. 12ກ່ຽວກັບສິ່ງທີ່ພຣະເຈົ້າຊົງຕັກເຕືອນໃຈຂ້າພະເຈົ້າໃຫ້ເຮັດເພື່ອນະຄອນເຢຣູຊາເລັມ

ເມື່ອຕົກຕອນທ່ຽງຄືນຂ້າພະເຈົ້າໄດ້ລຸກຂຶ້ນໄປກັບເພື່ອນບາງຄົນທີ່ຢູ່ກັບຂ້າພະເຈົ້າ ພວກຂ້າພະ-
ເຈົ້າມີສັດພຽງໂຕດຽວ ຄືລໍທີ່ຂ້າພະເຈົ້າຂີ່ນັ້ນ.
13ຂ້າພະເຈົ້າອອກຈາກເມືອງທາງປະຕູເບື້ອງຮ່ອມ
ພູທາງທິດຕາເວັນຕົກ ແລະໄປທາງເບື້ອງໃຕ້ຜ່ານນໍ້າບໍ່ມັງກອນ ຈົນໄປຮອດປະຕູບ່ອນຖິ້ມຂີ້
ເຫຍື້ອ ເພື່ອລຽບເບິ່ງກຳແພງເມືອງທີ່ເພພັງ ແລະປະຕູເມືອງທີ່ຖືກທຳລາຍ.
14ແລ້ວຂ້າພະເຈົ້າກໍ
ໄປທາງເໜືອໄປທາງປະຕູບໍ່ນໍ້າ ແລະທາງສະນໍ້າພະລາຊະວັງ ທາງເສັ້ນນີ້ບໍ່ມີບ່ອນໃຫ້ລໍຂອງ
ຂ້າພະເຈົ້າຜ່ານໄປໄດ້.
15ດັ່ງນັ້ນ ຂ້າພະເຈົ້າຈຶ່ງຂຶ້ນໄປທາງຮ່ອມພູ ເພື່ອກວດເບິ່ງກຳແພງເມືອງ
ຂ້າພະເຈົ້າໄດ້ກັບຄືນມາທາງເກົ່າ ແລະກັບຄືນເມືອເມືອງ ໂດຍຜ່ານທາງປະຕູເບື້ອງຮ່ອມພູ.
16ພວກບັນດາຂ້າລາຊະການບໍ່ຮູ້ເລີຍວ່າ ຂ້າພະເຈົ້າໄດ້ໄປບ່ອນໃດ ແລະໄດ້ເຮັດຫຍັງແດ່ ຍິ່ງ
ໄປກວ່ານັ້ນ ຂ້າພະເຈົ້າບໍ່ໄດ້ບອກຫຍັງໝົດແກ່ພວກຢູດາເຊັ່ນວ່າ ພວກປະໂລຫິດ ພວກຜູ້ນຳ
ພວກບັນດາຂ້າລາຊະການແລະພວກອື່ນໆ ທີ່ຈະປະກອບສ່ວນເຂົ້າໃນວຽກງານນີ້.
17ແຕ່ດຽວນີ້
ຂ້າພະເຈົ້າໄດ້ເວົ້າກັບພວກເຂົາວ່າ "ພວກທ່ານເຫັນບໍວ່າ ຄວາມວຸ້ນວາຍໃຈທີ່ພວກເຮົາໄດ້ຮັບ
ຫລວງຫລາຍສໍ່າໃດ ຍ້ອນວ່ານະຄອນເຢຣູຊາເລັມຖືກຮ້າງເປົ່າ ແລະປະຕູເມືອງຖືກທຳລາຍ
ດັ່ງນັ້ນ ຂໍໃຫ້ພວກເຮົາພ້ອມພາກັນສ້າງກຳແພງເມືອງຂຶ້ນໃໝ່ ເພື່ອພວກເຮົາຈະບໍ່ອັບອາຍຂາຍ-
ໜ້າ."
18ແລ້ວຂ້າພະເຈົ້າໄດ້ບອກພວກເຂົາວ່າ ພຣະເຈົ້າໄດ້ຊົງຊ່ວຍເຫລືອ ແລະສະຖິດຢູ່ກັບ
ຂ້າພະເຈົ້າຢ່າງໃດຕະຫລອດເຖິງສິ່ງທີ່ເຈົ້າຊີວິດໄດ້ບອກກັບຂ້າພະເຈົ້າອີກດ້ວຍ. ພວກເຂົາເວົ້າ
ຂຶ້ນວ່າ, "ຂໍໃຫ້ພວກເຮົາເລີ່ມລົງມືສ້າງເທີ້ນ" ແລ້ວພວກເຂົາກໍຕຽມພ້ອມລົງມືທຳງານ.
19ແຕ່ວ່າ
ເມື່ອສັນບັນລັດ ໂຕບີຢາ ແລະເກເຊມຊາວອາຫລັບໄດ້ຮູ້ຂ່າວ ພວກເຂົາກໍພາກັນຫົວຂວັນ
ພວກຂ້າພະເຈົ້າ ພວກເຂົາເວົ້າວ່າ "ພວກເຈົ້າຄິດຢ່າງໃດຈຶ່ງເຮັດດັ່ງນີ້? ພວກເຈົ້າຈະກະບົດເຈົ້າ
ຊີວິດບໍ?
20ຂ້າພະເຈົ້າຈຶ່ງຕອບວ່າ, "ພຣະຜູ້ເປັນເຈົ້າຜູ້ຊົງປະທັບຢູ່ເທິງສະຫວັນຊັ້ນຟ້າ ຈະຊົງ
ປະທານຄວາມສຳເລັດໃຫ້ແກ່ພວກເຮົາ ພວກຂ້າພະເຈົ້າກຳລັງເລີ່ມລົງມືສ້າງຂຶ້ນ ເພາະວ່າ
ພວກຂ້າພະເຈົ້າເປັນຜູ້ຮັບໃຊ້ຂອງພຣະອົງ ແຕ່ພວກທ່ານບໍ່ມີສ່ວນໃດໃນນະຄອນເຢຣູຊາເລັມ
ພວກທ່ານບໍ່ມີສິດໃດໆ ໃນບ່ອນນີ້."

# ບົດທີ 3

1ແລ້ວເອລີຢາຊີບ ປະໂລຫິດຕົນໃຫຍ່ໄດ້ລຸກຂຶ້ນພ້ອມກັບພີ່ນ້ອງຂອງຕົນ ບັນດາປະໂລຫິດ
ພວກເຂົາທັງຫລາຍໄດ້ສ້າງປະຕູແກະ ໄດ້ເຮັດພິທີຊຳລະໃຫ້ບໍລິສຸດ ແລະຕັ້ງບານປະຕູ ທັງຊຳ-
ລະໃຫ້ບໍລິສຸດຈົນຮອດຫໍຄອຍຮ້ອຍຄົນ ໄປຈົນເຖິງຫໍຄອຍຮານາເນນ.
2ແລະຕໍ່ໄປນັ້ນ ຊາວເຢ-
ຣີໂກ ກໍໄດ້ສ້າງສ່ວນຂອງຕົນ ຕໍ່ໄປກໍແມ່ນສ່ວນຂອງຊາກູເຣ ບຸດຂອງອິມຣີ ກໍໄດ້ສ້າງຄືນ-
ໃໝ່.

3ສ່ວນຕໍ່ໄປກໍແມ່ນສ່ວນຂອງລູກຫລານຮັດເສນາອາ ໄດ້ສ້າງປະຕູປາ. ພວກເຂົາວາງວົງກົບ
ແລະບານປະຕູ ຕິດກອນ ກັບແປ້ນປະຕູໄວ້.
4ສ່ວນຕໍ່ໄປ ແມ່ນສ່ວນຂອງເມເຣໂມດບຸດອູຣີຢາ
ຜູ້ເປັນບຸດຮັກກົດ ໄດ້ສ້ອມແຊມ. ສ່ວນຕໍ່ໄປ ເມຊຸນລຳລູກຊາຍຂອງເບເຣກີຢາ ລູກຊາຍຂອງ
ເມເຊດຊະເບນ. ແລະສ່ວນຕໍ່ໄປ ຊາໂດກບຸດຂອງບາອານາກໍໄດ້ສ້ອມແຊມ.
5ແລະສ່ວນຕໍ່

ຈາກພວກເຂົາໄປ ຊາວເຕໂກອາ ກໍໄດ້ສ້ອມແຊມ ແຕ່ພວກຂຸນນາງຂອງພວກເຂົາບໍ່ຍອມເອົາ
ບ່າມາຮັບງານຂອງພຣະເຈົ້າເລີຍ.

6ໂຢຢາດາບຸດປາເສອາ ແລະເມຊຸນລຳບຸດເບໂສເດຢາໄດ້ສ້ອມແຊມປະຕູເກົ່າ. ພວກເຂົາ
ວາງວົງກົບ ແລະບານປະຕູ ຕິດກອນສະຫລັກ ກັບແປ້ນປະຕູ. 7ແລະສ່ວນຕໍ່ໄປ ແມ່ນ ເມລາ-
ຕີຢາ ຊາວກິເບໂອນ ແລະຢາໂດນຊາວເມໂຣໂນດ ຄົນເມືອງກິເບໂອນ ແລະເມືອງມິດຊະ-
ປາໄດ້ພາກັນສ້ອມແຊມ ຊຶ່ງຢູ່ພາຍໃຕ້ການປົກຄອງຂອງເຈົ້າເມືອງຟາກຕາເວັນຕົກແມ່ນ້ຳເອ-
ຟຣາດ. 8ຕໍ່ຈາກພວກເຂົາໄປແມ່ນ ອຸດຊີເອນ ບຸດຮາຮາຢາ ຊ່າງຄຳໄດ້ສ້ອມແຊມສ່ວນຂອງ
ຕົນ. ຕໍ່ຈາກພວກເຂົາໄປ ຮານານີຢາ ຊ່າງປຸງແຕ່ງນ້ຳຫອມໄດ້ສ້ອມແຊມບຸລະນະສ້າງສາໄປ
ຈົນຮອດຕອນກຳແພງກວ້າງ. 9ຕໍ່ຈາກພວກເຂົາໄປ ຄື ເຣຟາຢາ ບຸດຮູເຣຜູ້ປົກຄອງແຂວງເຄິ່ງ
ໜຶ່ງຂອງກຸງເຢຣູຊາເລັມໄດ້ສ້ອມແຊມ. 10ຕໍ່ຈາກສ່ວນຂອງພວກເຂົາໄປ ຄື ເຢດາຢາ ບຸດຮາ-
ຣຸມັບໄດ້ສ້ອມແຊມໃນສ່ວນທີ່ກົງກັນຂ້າມກັບບ້ານຂອງພວກເຂົາ ແລະຕໍ່ຈາກພວກເຂົາໄປກໍຄື
ຮັດຕຸຊະ ບຸດຮາຊັບເນຢາໄດ້ສ້ອມແຊມ. 11ມັນກີຢາ ບຸດຮາຣິມ ແລະຮັດຊຸບ ບຸດປາຮາດ-
ໂມອາບໄດ້ສ້ອມແຊມອີກສ່ວນໜຶ່ງ ແລະຫໍຄອຍເຕົາອົບ. 12ຕໍ່ຈາກພວກເຂົາໄປຄື ຊານລູມ
ບຸດຮັນໂລເຮັດ ຜູ້ປົກຄອງແຂວງເຄິ່ງໜຶ່ງຂອງກຸງເຢຣູຊາເລັມ ໄດ້ສ້ອມແຊມພ້ອມທັງລູກຍິງ
ຂອງພວກເຂົາ.

13ຮານູນ ແລະຊາວເມືອງຊາໂນອາໄດ້ສ້ອມແຊມປະຕູຫວ່າງພູ. ພວກເຂົາສ້າງປະຕູຂຶ້ນໃໝ່
ແລະຕັ້ງບານປະຕູ ຕິດກອນ ແຜ່ນປະຕູ ແລະສ້ອມແຊມກຳແພງໄລຍະພັນສອກໄປຈົນຮອດ
ປະຕູກອງຂີ້ເຫຍື້ອ.

14ມັນກີຢາ ບຸດເຣກາບ ຜູ້ປົກຄອງແຂວງເບັດ-ຮັກເຄເຣັມ ໄດ້ສ້ອມແຊມປະຕູກອງຂີ້-
ເຫຍື້ອ ພວກເຂົາສ້າງແລະຕັ້ງບານປະຕູ ຕິດກອນ ແລະແຜ່ນປະຕູ.

15ຊັນລູນ ບຸດໂກນໂຮເຊ ຜູ້ປົກຄອງແຂວງມິດຊະປາ ໄດ້ສ້ອມແຊມປະຕູນ້ຳພຸ, ລາວໄດ້ມຸງ
ຫລັງຄາປະຕູ ແລະຕັ້ງບານປະຕູ ພ້ອມທັງຕິດກອນແລະແຜ່ນປະຕູ. ບ່ອນທີ່ມີສະນ້ຳເຊລາ
ເພິ່ນໄດ້ສ້າງກຳແພງຂຶ້ນໄປຈົນຮອດສວນອຸທະຍານທີ່ຕໍ່ລົງມາຈາກບັນໃດ ນະຄອນຂອງດາວິດ.
16ຕໍ່ຈາກພວກເຂົາໄປ, ເນເຮມີຢາ ບຸດຂອງອັດຊະບຸກ ຜູ້ປົກຄອງເຄິ່ງໜຶ່ງຂອງເມືອງເບັດ-ຊູ-
ເຣ ໄດ້ສ້ອມແຊມໄປຈົນຮອດອຸບໂມງຝັງສົບຂອງດາວິດ ສືບຕໍ່ໄປຮອດສະນ້ຳ ແລະບ່ອນຄ້າຍ
ທະຫານ.

17ຕໍ່ຈາກພວກເຂົາໄປ ກໍແມ່ນຄົນເລວີເປັນຜູ້ສ້ອມແຊມ ຄືເຣຮູມ ບຸດບານີ ແລະຕໍ່ຈາກ
ພວກເຂົາໄປກໍຄື ຮາຊາບີຢາຜູ້ປົກຄອງເຄິ່ງໜຶ່ງຂອງແຂວງເກອີລາ. 18ຕໍ່ຈາກພວກເຂົາໄປ ກໍ
ແມ່ນພີ່ນ້ອງຂອງພວກເຂົາໄດ້ສ້ອມແຊມ ຄືບາວາຍ ບຸດເຮນາດາດ ຜູ້ປົກຄອງເຄິ່ງໜຶ່ງຂອງ
ແຂວງເກອີລາ.

19ຕໍ່ຈາກພວກເຂົາໄປ ກໍແມ່ນເອເຊ ບຸດເຢຊູອາ ຜູ້ປົກຄອງເມືອງມິດຊະປາໄດ້ສ້ອມແຊມ
ອີກສ່ວນໜຶ່ງ ກົງກັນຂ້າມກັບທາງຂຶ້ນໄປຄັງອາວຸດທີ່ຈຸດຄົບກັນຂອງກຳແພງ. 20ຕໍ່ຈາກ
ພວກເຂົາໄປ ຄື ບາຣຸກ ບຸດຊັບບາຍ ໄດ້ສ້ອມແຊມຢ່າງຮີບຮ້ອນໃຈອີກສ່ວນໜຶ່ງ ນັບແຕ່ຈຸດ

ຄົບກັນຂອງກຳແພງ ໄປຈົນຮອດປະຕູເຮືອນຂອງເອລີຢາຊິບ ປະໂລຫິດຕົນໃຫຍ່. [21]ຕໍ່ຈາກ
ພວກເຂົາໄປ ຄື ເມເຣໂມດ ບຸດອູຣີຢາ ຜູ້ເປັນບຸດຮັກໂກດ ໄດ້ສ້ອມແຊມອີກສ່ວນໜຶ່ງ ຕັ້ງແຕ່
ປະຕູເຮືອນຂອງເອລີຢາຊິບ. [22]ຕໍ່ຈາກພວກເຂົາໄປ ແມ່ນບັນດາປະໂລຫິດໄດ້ພາກັນສ້ອມແຊມ.
[23]ຕໍ່ຈາກພວກເຂົາໄປ ແມ່ນ ເບັນຢາມິນ ແລະຮັດຊຸບ ໄດ້ສ້ອມແຊມໃນສ່ວນໜ້າບ້ານຂອງ
ພວກເຂົາເອງ ຕໍ່ຈາກພວກເຂົາໄປແມ່ນ ອາຊາຣີຢາ ບຸດມາອາເສຢາ ຜູ້ເປັນບຸດອານານີຢາ
ໄດ້ສ້ອມແຊມໃນສ່ວນທີ່ຢູ່ຂ້າງເຮືອນລາວເອງ. [24]ຕໍ່ຈາກພວກເຂົາໄປ ກໍແມ່ນ ບິນນຸຍ ບຸດເຮ-
ນາດາດ ໄດ້ສ້ອມແຊມອີກສ່ວນໜຶ່ງ ຕັ້ງແຕ່ບ້ານຂອງອາຊາຣີຢາຈົນຮອດຈຸດຄົບກັນຂອງກຳ-
ແພງ. [25]ປາລານ ບຸດອູຊາຍ ໄດ້ສ້ອມແຊມສ່ວນທີ່ຢູ່ກົງກັນຂ້າມກັບຈຸດລ້ຽວ ແລະຫໍຄອຍທີ່ຍື່ນ
ຈາກພະລາຊະວັງໃນລານຂອງທະຫານຮັກສາພະອົງ ຕໍ່ໄປຄື ເປດາຢາ ບຸດປາໂຣດ. [26]ແລະ
ຄົນໃຊ້ປະຈຳພຣະວິຫານຢູ່ທີ່ໂອເຟນໄດ້ສ້ອມແຊມໄປຈົນຮອດບ່ອນກົງກັນຂ້າມກັບປະຕູນ້ຳທາງ
ດ້ານຕາວັນອອກ ແລະຫໍຄອຍຍື່ນອອກໄປ. [27]ຕໍ່ຈາກພວກເຂົາໄປ ຊາວເຕໂກອາ ໄດ້ສ້ອມ-
ແຊມອີກສ່ວນໜຶ່ງທີ່ຢູ່ກົງກັນຂ້າມກັບຫໍຄອຍໃຫຍ່ທີ່ຍື່ນອອກໄປໄກໄປຈົນຮອດປະຕູເມືອງໂອ-
ເຟນ.

[28]ບັນດາປະໂລຫິດໄດ້ສ້ອມແຊມປະຕູມ້າສືບຕໍ່ໄປ ພວກເຂົາໄດ້ສ້ອມແປງບ່ອນທີ່ຊື່ກັບເຮືອນ
ຂອງຕົນເອງ. [29]ຕໍ່ຈາກພວກເຂົາໄປ ກໍແມ່ນ ຊາໂດກ ບຸດອິມເມ ໄດ້ສ້ອມແຊມບ່ອນກົງກັນ-
ຂ້າມຂອງເຮືອນຂອງຕົນ. ຕໍ່ຈາກພວກເຂົາໄປ ເຊມາຢາ ບຸດເຊການີອາ ຄົນເຝົ້າປະຕູຕາເວັນ
ອອກໄດ້ສ້ອມແຊມ. [30]ຕໍ່ຈາກພວກເຂົາໄປ ກໍແມ່ນ ຮານານີຢາ ບຸດເຊເລມີຢາ ແລະຮານູນ
ບຸດຄົນທີຫົກຂອງຊາລາບ ໄດ້ສ້ອມແຊມອີກສ່ວນໜຶ່ງ ຕໍ່ຈາກພວກເຂົາໄປ ຄື ເມຊຸນລຳ ບຸດ
ເບເຣກີຢາໄດ້ສ້ອມແຊມສ່ວນທີ່ກົງກັນຂ້າມກັບຫ້ອງຂອງພວກເຂົາ. [31]ຕໍ່ຈາກພວກເຂົາໄປແມ່ນ
ມັນກີຢາ ຊ່າງຕີຄຳຄົນໜຶ່ງໄດ້ສ້ອມແຊມໄປຈົນຮອດເຮືອນຂອງຄົນໃຊ້ປະຈຳພຣະວິຫານ ແລະ
ຂອງພໍ່ຄ້າ ຊຶ່ງຢູ່ກົງກັນຂ້າມກັບປະຕູກວດພົນໄປຈົນຮອດຫ້ອງຊັ້ນເທິງ. [32]ແລະລະຫວ່າງຫ້ອງ
ຊັ້ນເທິງທີ່ຈຸດລ້ຽວຂອງປະຕູແກະນັ້ນ ບັນດາຊ່າງຕີຄຳ ແລະພວກພໍ່ຄ້າພາກັນສ້ອມແຊມ.

# ບົດທີ 4

[1]ເມື່ອ ສັນບັນລັດ ໄດ້ຍິນຂ່າວ ພວກຂ້າພະເຈົ້າທີ່ເປັນຊາວຢູດາ ກຳລັງສ້າງກຳແພງເມືອງ
ເພິ່ນກໍໃຈຮ້າຍຂຶ້ນແລະເວົ້າເຍາະເຍີ້ຍພວກຂ້າພະເຈົ້າ. [2]ເພິ່ນເວົ້າຕໍ່ໜ້າພັກພວກຂອງເພິ່ນ ແລະ
ຕໍ່ໜ້າກອງທະຫານຊາມາເຣຍວ່າ ຊາວຢູດາທີ່ໜ້າສົມເພດເວດທະນາພວກນີ້ ຄິດຢ່າງໃດຈຶ່ງ
ເຮັດຢ່າງນີ້? ພວກເຂົາຄາດໝາຍວ່າຈະສ້າງເມືອງຂຶ້ນໃໝ່ຊັ້ນບໍ? ພວກເຂົາຄິດວ່າຈະສາມາດ
ເຮັດໃຫ້ແລ້ວໃນມື້ດຽວໂດຍການເຜົາເຄື່ອງຖວາຍບູຊາຊັ້ນບໍ? ພວກເຂົາຈະເອົາເສດກຳແພງທີ່
ຖືກທຳລາຍແລ້ວນັ້ນ ມາກໍ່ສ້າງອີກໄດ້ຊັ້ນບໍ?”

[3]ໂຕບີຢາ ຊາວອຳໂມນທີ່ຢືນຢູ່ຂ້າງເພິ່ນໄດ້ເວົ້າຕື່ມຂຶ້ນວ່າ, “ພວກເຂົາກໍ່ສ້າງກຳແພງແບບ
ໃດກັນ? ແມ່ນແຕ່ໝາແລ່ນຕຳກໍຍັງຊິລົ້ມ.”

[4]ຂ້າພະເຈົ້າເນເຮມີຢາ ຈຶ່ງອ້ອນວອນພຣະຜູ້ເປັນເຈົ້າວ່າ, “ຂ້າແດ່ພຣະເຈົ້າ ຂໍພຣະອົງຊົງ

ຟັງຄຳທີ່ພວກເຂົາດູໝິ່ນພວກຂ້ານ້ອຍແດ່ທ້ອນ ຂໍໃຫ້ຄຳເຍາະເຍີ້ຍນັ້ນຕົກຖືກຕົວພວກເຂົາເອງ
ແລະຂໍໃຫ້ເຂົາເຈົ້າໄປເປັນຄົນຂີ້ຄຸກຢູ່ຕ່າງປະເທດເທີ້ນ. [5]ຂໍພຣະອົງຢ່າຊົງອະໄພໂທດໃນຄວາມ
ຊົ່ວຊ້າຂອງເຂົາເຈົ້າ ແລະຂໍຢ່າໄດ້ລືມຄວາມບາບຂອງພວກເຂົາ ເພາະວ່າ ພວກເຂົາໝິ່ນປະ-
ໝາດພວກຂ້ານ້ອຍ ຜູ້ກຳລັງສ້າງເມືອງນີ້.”
[6]ດັ່ງນັ້ນ ພວກຂ້ານ້ອຍຈຶ່ງພາກັນສ້າງກຳແພງເມືອງຕໍ່ໄປ ບໍ່ພໍເທົ່າໃດກຳແພງເມືອງນັ້ນກໍສູງ
ຂຶ້ນໄດ້ເຄິ່ງໜຶ່ງແລ້ວ ຍ້ອນວ່າປະຊາຊົນພາກັນຮ້ອນຮົນຕໍ່ວຽກການ.
[7]ເມື່ອສັນບັນລັດ ແລະໂຕບີຢາ ຊາວອາຫລັບ ຊາວອຳໂມນ ແລະຊາວອາຊະໂດດໄດ້ຍິນ
ຂ່າວວ່າ ພວກຂ້າພະເຈົ້າສ້າງກຳແພງນະຄອນເຢຣູຊາເລັມຄືບໜ້າຕໍ່ໄປ ແລະທັງຮູ້ວ່າ ປ່ອງທີ່
ແຕກກໍໄດ້ອັດໝົດແລ້ວ ພວກເຂົາຈຶ່ງຄຽດແຄ້ນຫລາຍ. [8]ດັ່ງນັ້ນ ພວກເຂົາຈຶ່ງພາກັນວາງແຜນ
ຕໍ່ສູ້ນະຄອນເຢຣູຊາເລັມ ແລະໄດ້ສ້າງຄວາມປັ່ນປ່ວນຂຶ້ນ [9]ແຕ່ພວກຂ້າພະເຈົ້າໄດ້ອ້ອນວອນ
ພຣະເຈົ້າຂອງພວກຂ້າພະເຈົ້າ ແລະຈັດທະຫານເຝົ້າຍາມຕໍ່ຕ້ານພວກເຂົາ ຕະຫລອດເວັນຕະ-
ຫລອດຄືນ. [10]ຊາວຢູດາພາກັນຮ້ອງເພງວ່າ, “ພວກເຮົາອ່ອນແຮງໃນການຂົນຫີນແຕກມຸ່ນທີ່ຈະ
ຕ້ອງເອົາໄປຖິ້ມ ເພາະມີຫລາຍໂພດມື້ນີ້ ພວກເຮົາຈະສ້າງກຳແພງເມືອງໄດ້ຢ່າງໃດ?”
[11]ພວກສັດຕູຄິດວ່າ ພວກຂ້າພະເຈົ້າບໍ່ເຫັນເຂົາເຈົ້າ ແລະເວົ້າວ່າ, “ພວກເຂົາບໍ່ຮູ້ຈັກເຫດ-
ການທີ່ເກີດຂຶ້ນ ຈົນວ່າເຂົາເຈົ້າໄດ້ມາຢູ່ໃນເມືອງນີ້ແລ້ວ ເພື່ອປະຫານຊີວິດ ແລະຂັດຂວາງວຽກ
ການຂອງພວກຂ້າພະເຈົ້າ.
[12]ພວກຢູດາທີ່ຢູ່ນຳພວກສັດຕູກໍມາເຕືອນພວກເຮົາທຸກໄລຍະເຖິງແຜນການທີ່ສັດຕູວາງຕໍ່ສູ້.
[13]ດັ່ງນັ້ນ ຂ້າພະເຈົ້າຈຶ່ງເອົາຫອກ ດາບ ແລະໜ້າທະນູໃຫ້ປະຊາຊົນ ໂດຍຈັດໃຫ້ເຂົາເຈົ້າຢູ່
ເປັນກຸ່ມທາງເບື້ອງຫລັງຂອງກຳແພງຕາມບ່ອນທີ່ຍັງບໍ່ທັນແລ້ວ. [14]ຂ້າພະເຈົ້າເຫັນວ່າປະຊາຊົນ
ມີຄວາມກັງວົນໃຈ ຂ້າພະເຈົ້າຈຶ່ງເວົ້າກັບເຂົາເຈົ້າ ແລະພວກຜູ້ນຳພ້ອມທັງພວກຂ້າລາຊະການ
ວ່າ, “ບໍ່ຕ້ອງຢ້ານພວກສັດຕູດອກ ຈົ່ງຈື່ຈຳພຣະຜູ້ເປັນເຈົ້າອົງຊົງຍິ່ງໃຫຍ່ ແລະເປັນທີ່ຢຳເກງ
ຫລາຍ ພຣະອົງຊົງຕໍ່ສູ້ເພື່ອເພື່ອນຮ່ວມຊາດ ເພື່ອລູກເມຍ ແລະປະເທດຊາດຂອງທ່ານ.”
[15]ເມື່ອພວກສັດຕູໄດ້ຮູ້ຂ່າວວ່າ ພວກຂ້າພະເຈົ້າຮູ້ຈັກແຜນການຂອງເຂົາເຈົ້າ ພວກເຂົາຈຶ່ງຮູ້
ວ່າ ພຣະເຈົ້າຊົງເຮັດໃຫ້ແຜນການຂອງພວກເຂົາຜ່າຍແພ້ໄປ ສ່ວນພວກຂ້າພະເຈົ້າທຸກຄົນກໍ
ກັບຄືນເມືອເຮັດວຽກຕາມກຳແພງເມືອງ. [16]ຈາກນັ້ນ ປະຊາຊົນຂອງຂ້າພະເຈົ້າເຄິ່ງໜຶ່ງກໍພາກັນ
ເຮັດວຽກ ແຕ່ສ່ວນເຄິ່ງໜຶ່ງອີກໄດ້ເປັນທະຫານຍາມ ພວກເຂົາຖືດາບ ທະນູແຜ່ນເຫລັກຕ້ານ-
ທານ ແລະນຸ່ງເຄື່ອງຫຸ້ມເກາະ ແລະພວກຜູ້ນຳກໍສະໜັບສະໜູນຊາວຢູດາຢ່າງເຕັມທີ ຄືພວກທີ່
ສ້ອມແຊມເມືອງນັ້ນ. [17]ສ່ວນພວກລຳລຽງເຄື່ອງກໍ່ສ້າງແຕ່ລະຄົນ ມືໜຶ່ງຖືເຄື່ອງໃຊ້ ແລະມືໜຶ່ງ
ອີກຖືອາວຸດ. [18]ພວກເຂົາກໍ່ສ້າງ ໃນເວລາເຮັດວຽກກໍມີດາບເໜັບແອວໄວ້ທຸກຄົນ ສ່ວນຜູ້ທີ່ເປົ່າ
ແກສັນຍານບອກເຫດການນັ້ນໄດ້ຢູ່ກັບຂ້າພະເຈົ້າ.
[19]ຂ້າພະເຈົ້າບອກກັບປະຊາຊົນ ພວກຂ້າລາຊະການແລະພວກຜູ້ນຳໃຫ້ເຂົ້າໃຈວ່າ, “ວຽກ
ການຂອງພວກເຮົາໄດ້ຂະຫຍາຍອອກໄປເປັນໄລຍະໄກ ແລະພວກເຮົາໄດ້ຢາຍກັນຢູ່ຫ່າງໆເທິງ
ກຳແພງ. [20]ຖ້າພວກທ່ານໄດ້ຍິນສຽງສັນຍານບອກເຫດຈົ່ງພາກັນຮີບມາທ້ອນໂຮມຢູ່ອ້ອມຮອບ

ຂ້າພະເຈົ້າ ພຣະເຈົ້າຂອງພວກເຮົາຈະສູ້ຮົບໃຫ້ພວກເຮົາເອງ.”
21ດັ່ງນັ້ນ ທຸກໆ ມື້ຕັ້ງແຕ່ເຊົ້າມືດຈົນຮອດດາວອອກໃນເວລາກາງຄືນ ຄົນເຄິ່ງໜຶ່ງໃນພວກ
ຂ້າພະເຈົ້າກໍເຮັດວຽກຢູ່ຕາມກຳແພງ ແລະອີກເຄິ່ງໜຶ່ງກໍຖືຫອກຢືນຍາມ. 22ໃນເວລານັ້ນ ຂ້າ-
ພະເຈົ້າໄດ້ບອກໃຫ້ຜູ້ມີພາລະເຮັດວຽກທຸກຄົນ ພ້ອມທັງຜູ້ຊ່ວຍຂອງພວກເຂົາ ຄ້າງຄືນທີ່ນະ-
ຄອນເຢຣູຊາເລັມ ເພື່ອໃຫ້ພວກເຂົາຍາມເມືອງໃນເວລາກາງຄືນ ແລະເຮັດວຽກໃນເວລາກາງ-
ເວັນ. 23ຂ້າພະເຈົ້າພ້ອມທັງໝູ່ເພື່ອນ ຍາດພີ່ນ້ອງ ຄົນໃຊ້ ແລະຄົນເຝົ້າຍາມປະຈຳຕົວຂອງຂ້າ-
ພະເຈົ້າບໍ່ໄດ້ຖອດເຄື່ອງນຸ່ງໃນຕອນກາງຄືນ ພວກຂ້າພະເຈົ້າທຸກຄົນກໍບໍ່ໄດ້ປະອາວຸດຈັກເທື່ອ.

# ບົດທີ 5

## ສ່ວນທີ່ກຳນົດໃຫ້ສ້ອມແປງ

1ປະຊາຊົນ ແລະເມຍຂອງພວກເຂົາໄດ້ຮ້ອງສຽງດັງກ່າວໂທດພີ່ນ້ອງພວກຢິວ 2ເພາະມີຄົນ
ທີ່ກ່າວວ່າ “ເຮົາຫຼາຍຄົນທັງລູກຊາຍ ແລະລູກສາວຂອງເຮົາ ຂໍໃຫ້ເຮົາໄດ້ເຂົ້າ ເພື່ອເຮົາຈະໄດ້
ຮັບປະທານ ແລະມີຊີວິດຢູ່ໄດ້” 3ແລະມີບາງຄົນກ່າວວ່າ “ເຮົາຕ້ອງຈຳໄຮ່ນາຂອງເຮົາ ສວນ
ອະງຸ່ນຂອງເຮົາ ແລະບ້ານເຮືອນຂອງເຮົາ ເພື່ອຈະໄດ້ເຂົ້າມາກິນ ເພາະການອຶດອາຫານ”
4ແລະຄົນອື່ນໆກ່າວວ່າ “ເຮົາໄດ້ຂໍຢືມເງິນມາເປັນຄ່າພາສີຖວາຍກະສັດ ໂດຍຈຳນາ ແລະສວນ
ອະງຸ່ນຂອງເຮົາ 5ເນື້ອໜັງຂອງເຮົາເປັນເໝືອນເນື້ອໜັງພວກພີ່ນ້ອງຂອງເຮົາ ລູກຂອງເຮົາກໍ
ເໝືອນລູກຂອງພວກເຂົາ ແຕ່ເບິ່ງແມ ເຮົາກໍຍັງໃຫ້ລູກຫລານຂອງເຮົາເປັນຂ້າທາດ ລູກສາວ
ຂອງເຮົາບາງຄົນໄດ້ເປັນຂ້າທາດແລ້ວ ແລະເຮົາບໍ່ມີກຳລັງທີ່ຈະໄຖ່ພວກເຂົາເລີຍ ເພາະຄົນອື່ນ
ຢຶດນາ ແລະສວນອະງຸ່ນຂອງເຮົາ”
6ເມື່ອຂ້າພະເຈົ້າໄດ້ຍິນສຽງຮ້ອງຂອງພວກເຂົາ ແລະຖ້ອຍຄຳຂອງພວກເຂົາ ຂ້າພະເຈົ້າກໍ
ຮ້າຍຫຼາຍ 7ຂ້າພະເຈົ້າຕຶກຕອງພິຈາລະນາແລ້ວກໍນຳຄວາມນີ້ໄປກ່າວຫາພວກເຈົ້ານາຍ ແລະ
ເຈົ້າໜ້າທີ່ ຂ້າພະເຈົ້າເວົ້າກັບພວກເຂົາວ່າ “ທ່ານທັງຫຼາຍບັງຄັບໃຫ້ພີ່ນ້ອງເສຍດອກເບ້ຍຈາກ
ທຸກໆຄົນບໍ?” ແລະຂ້າພະເຈົ້າກໍໂຮມຊຸມນຸມໃຫຍ່ມາຕໍ່ສູ້ກັບພວກເຂົາ 8ຂ້າພະເຈົ້າກ່າວແກ່ພວກ
ເຂົາວ່າ “ເຮົາໄດ້ໄຖ່ພວກຢິວພີ່ນ້ອງຂອງເຮົາ ຜູ້ຖືກຂາຍໄປຍັງຄົນຕ່າງປະເທດຄືນມາ ຕາມແຕ່
ເຮົາຈະສາມາດເຮັດໄດ້ ແຕ່ທ່ານພັດຂາຍພີ່ນ້ອງຂອງທ່ານ ເພື່ອພວກເຂົາຈະຖືກຂາຍໃຫ້ແກ່
ພວກເຮົາ” ຄົນທັງຫຼາຍກໍມິດຢູ່ເວົ້າບໍ່ອອກ
9ຂ້າພະເຈົ້າຈຶ່ງກ່າວວ່າ “ສິ່ງທີ່ທ່ານທັງຫຼາຍເຮັດຢູ່ນັ້ນບໍ່ດີ ທ່ານຄວນຈະດຳເນີນໃນຄວາມຢຳ
ເກງພຣະເຈົ້າຂອງເຮົາທັງຫຼາຍບໍ່ແມ່ນບໍ? ເພື່ອປ້ອງກັນການເຍາະເຍີ້ຍຂອງປະຊາຊາດເຫຼົ່ານັ້ນ
ຊຶ່ງເປັນສັດຕູຕໍ່ເຮົາ 10ຝ່າຍຂ້າພະເຈົ້າກັບພີ່ນ້ອງຂອງຂ້າພະເຈົ້າ ແລະຄົນໃຊ້ຂອງຂ້າພະເຈົ້າໃຫ້
ພວກເຂົາຢືມເງິນ ແລະຢືມເຂົ້າ ໃຫ້ເຮົາຍົກເລີກການໃຫ້ຢືມໂດຍເອົາດອກເບ້ຍນັ້ນສາ 11ໃນມື້ນີ້
ຂໍຈົ່ງຄືນໄຮ່ນາ ສວນອະງຸ່ນ ສວນໝາກກອກເທດ ແລະເຮືອນຂອງພວກເຂົາ ໃຫ້ພວກເຂົາ
ແລະເງິນ ສ່ວນຮ້ອຍ ເຂົ້າ ນ້ຳອະງຸ່ນ ແລະນ້ຳມັນ ຊຶ່ງທ່ານໄດ້ຂູດຮີດເອົາຈາກພວກເຂົານັ້ນ”
12ແລ້ວພວກເຂົາທັງຫຼາຍໄດ້ຕອບວ່າ “ເຮົາຈະຄືນສິ່ງເຫຼົ່ານີ້ແລະຈະບໍ່ຮຽກຮ້ອງສິ່ງໃດໆຈາກ

ພວກເຂົາ ເຮົາຈະກະທຳຕາມທີ່ທ່ານເວົ້າ" ແລະຂ້າພະເຈົ້າກໍເອີ້ນບັນດາປະໂລຫິດມາ ແລະໃຫ້
ປະໂລຫິດເອົາຄຳປະຕິຍານຈາກພວກເຂົາທັງຫຼາຍວ່າ ພວກເຂົາຈະກະທຳຕາມທີ່ພວກເຂົາສັນ-
ຍາແລ້ວນັ້ນ [13]ຂ້າພະເຈົ້າກໍຊັ່ນເສື້ອຂອງຂ້າພະເຈົ້າ ແລະເວົ້າວ່າ "ດັ່ງນັ້ນແຫຼະ ຖ້າຄົນໃດບໍ່ໄດ້
ກະທຳຕາມສັນຍານີ້ ຂໍພຣະເຈົ້າຊົງລົງໂທດພວກເຂົາຈາກເຮືອນຂອງພວກເຂົາ ແລະຈາກການ
ງານຂອງພວກເຂົາ ໃຫ້ພວກເຂົາຖືກຊັ່ນອອກແລ້ວໄປຕົວເປົ່າ" ຊຸມນຸມຊົນທັງປວງຈຶ່ງກ່າວວ່າ
"ອາແມນ" ແລະໄດ້ສັນລະເສີນພຣະຜູ້ເປັນເຈົ້າ ແລ້ວປະຊາຊົນກໍໄດ້ກະທຳຕາມທີ່ພວກເຂົາໄດ້
ສັນຍາໄວ້

## ພວກສັດຕູຂັດຂວາງວຽກການຂອງເນເຮມີຢາ

[14]"ຫຼາຍກວ່ານັ້ນອີກ ຕັ້ງແຕ່ມື້ນັ້ນ ຂ້າພະເຈົ້າໄດ້ຮັບແຕ່ງຕັ້ງໃຫ້ເປັນຜູ້ປົກຄອງໃນແຂວງຢູ-
ດາ ຕັ້ງແຕ່ປີທີຊາວຈົນປີທີສາມສິບສອງແຫ່ງລາຊະການກະສັດ ອາຕາເຊເຊັດ ໃນລະຫວ່າງສິບ
ສອງປີ ຂ້າພະເຈົ້າກັບພີ່ນ້ອງຂອງຂ້າພະເຈົ້າບໍ່ໄດ້ຮັບປະທານອາຫານຂອງຕຳແໜ່ງຜູ້ວ່າ ລາ-
ຊະການ [15]ຜູ້ວ່າລາຊະການຄົນທີ່ຢູ່ກ່ອນຂ້າພະເຈົ້າໄດ້ບຽດບຽນປະຊາຊົນ ໄດ້ເອົາເງິນເປັນຄ່າ
ອາຫານ ແລະນ້ຳອະງຸ່ນໄປຈາກພວກເຂົາ ນອກຈາກເງິນມື້ລະສີ່ສິບເຊເຂ ແມ່ນຂ້າລາຊະການ
ຂອງເພິ່ນກໍ ໄດ້ໃຊ້ອຳນາດເໜືອປະຊາຊົນ ແຕ່ວ່າຂ້າພະເຈົ້າບໍ່ໄດ້ກະທຳເຊັ່ນນັ້ນ ເພາະຄວາມ
ຢຳເກງພຣະເຈົ້າ [16]ຂ້າພະເຈົ້າຍັງໄດ້ຕັ້ງໝັ້ນຄົງໃນການກໍ່ສ້າງກຳແພງນີ້ຢູ່ ແລະບໍ່ໄດ້ຊື້ທີ່ດິນ
ເລີຍ ແລະຄົນໃຊ້ຂອງຂ້າພະເຈົ້າ ທັງໝົດກໍໄດ້ຊຸມນຸມກັນເຮັດວຽກຢູ່ບ່ອນນັ້ນ

[17]ຫຼາຍກວ່ານັ້ນ ຂ້າພະເຈົ້າມີຄົນໜຶ່ງຮ້ອຍຫ້າສິບຄົນທີ່ໄດ້ກິນອາຫານຢູ່ເທິງໂຕະກັບຂ້າພະ-
ເຈົ້າ ຄືພວກຢິວແລະ ເຈົ້າໜ້າທີ່ ນອກເໜືອຈາກບັນດາຜູ້ທີ່ມາຢູ່ກັບເຮົາທັງຫຼາຍຈາກປະຊາ-
ຊາດຜູ້ຊຶ່ງຢູ່ອ້ອມຮອບເຮົາ [18]ສິ່ງທີ່ຕຽມໄວ້ໃນແຕ່ລະມື້ ມີງົວໂຕໜຶ່ງ ແລະແກະທີ່ຄັດເລືອກແລ້ວ
ຫົກໂຕ ເປັດໄກ່ ພວກເຂົາກໍຈັດໄວ້ໃຫ້ຂ້າພະເຈົ້າໃນທຸກໆສິບມື້ນ້ຳອະງຸ່ນຢ່າງຫລວງຫລາຍຂ້າ-
ພະເຈົ້າບໍ່ໄດ້ຮຽກຮ້ອງເອົາສ່ວນອາຫານຂອງຕຳແໜ່ງຜູ້ວ່າລາຊະການ ເພາະວ່າການບົວລະບັດ
ຊົນ ຊາດນີ້ກໍໜັກຫລາຍຢູ່ແລ້ວ

[19]ຂ້າແດ່ພຣະເຈົ້າຂອງຂ້າພະອົງ ຂໍຊົງລະນຶກເຖິງສິ່ງທີ່ຂ້າພະອົງໄດ້ກະທຳເພື່ອຊົນຊາດນີ້
ໃຫ້ເກີດຜົນດີເຖີດ"

# ບົດທີ 6

## ຄົນຢິວ ຮັ່ງມີບາງຄົນເອົາພີ່ນ້ອງທີ່ເປັນໜີ້ພວກເຂົາມາເປັນຂ້າທາດ

[1]ຢູ່ມາເມື່ອມີລາຍງານໃຫ້ສັນບັນລັດ ໂຕບີຢາ ແລະເກເຊມຊາວອາຫລັບກັບສັດຕູອື່ນໆ
ຂອງເຮົາທັງຫຼາຍໄດ້ຍິນຂ່າວວ່າ ຂ້າພະເຈົ້າໄດ້ກໍ່ກຳແພງ ແລະບໍ່ມີບ່ອນແຕກເປັນປ່ອງເຫລືອຢູ່
(ເຖິງວ່າໃນມື້ນັ້ນ ຂ້າພະເຈົ້າຍັງບໍ່ໄດ້ຕັ້ງບານປະຕູທີ່ປະຕູເມືອງ) [2]ສັນບັນລັດກັບເກເຊມໃຊ້ໃຫ້
ຄົນມາຫາຂ້າພະເຈົ້າກ່າວວ່າ "ຂໍເຊີນມາພົບກັນໃນຊົນນະບົດແຫ່ງໜຶ່ງ ຢູ່ທົ່ງພຽງໂອໂນ" ແຕ່
ພວກເຂົາເຈດຕະນາຈະເຮັດອັນຕະລາຍແກ່ຂ້າພະເຈົ້າ

[3]ຂ້າພະເຈົ້າກໍໃຊ້ຜູ້ສົ່ງຂ່າວໄປຫາພວກເຂົາວ່າ "ຂ້າພະເຈົ້າກຳລັງເຮັດວຽກໃຫຍ່ ລົງມາບໍ່ໄດ້

ເປັນຫຍັງຈະໃຫ້ງານຢຸດໃນຂະນະທີ່ຂ້າພະເຈົ້າຖິ້ມງານລົງມາຫາທ່ານ” [4]ແລ້ວພວກເຂົາໃຊ້ໃຫ້
ຄົນມາຫາຂ້າພະເຈົ້າຢ່າງນີ້ເຖິງສີ່ເທື່ອ ຂ້າພະເຈົ້າກໍຕອບພວກເຂົາໄປໃນ ທຳນອງດຽວກັນ
[5]ສັນບັນລັດ ໄດ້ສົ່ງຄົນໃຊ້ຂອງເພິ່ນມາຫາຂ້າພະເຈົ້າໃນທຳນອງດຽວກັນເປັນເທື່ອທີ່ຫ້າ ຖື
ຈົດໝາຍເປີດມາ (ບໍ່ມີຊອງໃນມື) [6]ໃນໜັງສືນັ້ນມີຄຳຂຽນໄວ້ວ່າ “ມີຂ່າວລືໄປໃນທ່າມກາງປະ-
ຊາຊາດທັງຫຼາຍ ແລະເກເຊມກໍກ່າວ ດ້ວຍວ່າ ຝ່າຍທ່ານ ແລະພວກຢິວ (ພວກຢູດາ) ເຈດ-
ຕະນາຈະກະບົດ ເພາະເຫດນັ້ນແຫລະ ທ່ານຈຶ່ງສ້າງກຳແພງ ແລະທ່ານປາດຖະໜາຈະເປັນ
ກະສັດຂອງພວກເຂົາຕາມຂ່າວທີ່ເຂົາເຈົ້າເວົ້ານັ້ນ [7]ແລະທ່ານໄດ້ແຕ່ງຕັ້ງຜູ້ພະຍາກອນໄວ້ໃຫ້
ປ່າວຮ້ອງກ່ຽວກັບຕົວທ່ານໃນເມືອງເຢຣູຊາເລັມວ່າ ‘ມີກະສັດໃນແຂວງຢູດາ’ ບັດນີ້ຈະໄດ້ລາຍ
ງານໃຫ້ກະສັດຊົງຮູ້ຕາມຖ້ອຍຄຳເຫລົ່ານີ້ ເຫດສະນັ້ນ ຂໍເຊີນທ່ານມາປຶກສາຫາລືນຳກັນ”
[8]ແລ້ວຂ້າພະເຈົ້າກໍໃຊ້ໃຫ້ໄປຫາພວກເຂົາກ່າວວ່າ “ສິ່ງທີ່ທ່ານກ່າວມານັ້ນ ເຮົາບໍ່ໄດ້ກະທຳ
ເລີຍ ທ່ານປັ້ນແຕ່ງຂຶ້ນຕາມໃຈຂອງທ່ານເອງ”
[9]ເພາະພວກເຂົາທັງຫຼາຍຕ້ອງການທີ່ຈະໃຫ້ເຮົາຕົກໃຈຄິດວ່າ “ມືຂອງເຮົາຈະປະຈາກວຽກໄປ
ແລະວຽກງານຈະບໍ່ສຳເລັດ” ແຕ່ຂ້າແດ່ພຣະເຈົ້າ ບັດນີ້ຂໍພຣະອົງຊົງເສີມກຳລັງມືຂອງຂ້າພະ-
ອົງ
[10]ແລ້ວຂ້າພະເຈົ້າເຂົ້າໄປໃນເຮືອນຂອງເຊມາຢາ ລູກຊາຍເດລາຢາ ຜູ້ເປັນລູກຊາຍເມເຣ-
ຕາເບນ ຜູ້ທີ່ເກັບຕົວຢູ່ ລາວເວົ້າວ່າ “ໃຫ້ເຮົາໄປພົບກັນໃນພຣະວິຫານຂອງພຣະເຈົ້າ ໃຫ້ເຮົາ
ປິດປະຕູພຣະວິຫານ ເພາະພວກເຂົາທັງຫຼາຍຈະມາຂ້າທ່ານ ເວລາກາງຄືນພວກເຂົາຈະມາຂ້າ
ທ່ານ”
[11]ແຕ່ຂ້າພະເຈົ້າຕອບວ່າ “ຄົນຢ່າງຂ້າພະເຈົ້າຈະໜີແລະຄົນຢ່າງຂ້າພະເຈົ້າຈະເຂົ້າໄປຢູ່ໃນ
ພຣະວິຫານ ເພື່ອຊ່ວຍຊີວິດໃຫ້ລອດໄດ້ ຂ້າພະເຈົ້າຈະບໍ່ເຂົ້າໄປ” [12]ເບິ່ງແມ ຂ້າພະເຈົ້າເຂົ້າໃຈ
ແລະເຫັນວ່າ ພຣະເຈົ້າບໍ່ໄດ້ຊົງໃຊ້ພວກເຂົາ ແຕ່ພວກເຂົາໄດ້ພະຍາກອນໃສ່ຮ້າຍຂ້າພະເຈົ້າ
ເພາະໂຕບີຢາ ແລະສັນບັນລັດໄດ້ຈ້າງພວກເຂົາ [13]ເພິ່ນທັງສອງໄດ້ຈ້າງພວກເຂົາມາດ້ວຍຫວັງ
ວ່າຈະໃຫ້ຂ້າພະເຈົ້າຢ້ານແລ້ວກະທຳເຊັ່ນນັ້ນ ຈະໄດ້ບາບ ແລະພວກເຂົາຈະມີເລື່ອງທຳຮ້າຍ
ຂ້າພະເຈົ້າ ເພື່ອຈະເຍາະເຍີ້ຍຂ້າພະເຈົ້າ
[14]“ຂ້າແດ່ພຣະເຈົ້າຂອງຂ້າພະອົງ ຂໍພຣະອົງຊົງລະນຶກເຖິງໂຕບີຢາ ແລະສັນບັນລັດຕາມ
ສິ່ງເຫລົ່ານີ້ທີ່ພວກເຂົາໄດ້ກະທຳ ທັງໂນອາດີຢາແມ່ຍິງຜູ້ພະຍາກອນ ແລະຜູ້ພະຍາກອນອື່ນໆ
ຊຶ່ງຕ້ອງການໃຫ້ຂ້າພະອົງຢ້ານ”

## ເນເຣມີຢາຮັບປະທານອາຫານຂອງຕົນເອງສິບສອງປີ

[15]ກຳແພງສຳເລັດໃນວັນທີຊາວຫ້າເດືອນເອລູນ ໃນລະຫວ່າງຫ້າສິບສອງມື້ [16]ແລະຢູ່ມາ
ເມື່ອສັດຕູທັງໝົດຂອງເຮົາທັງຫຼາຍໄດ້ຍິນຂ່າວນັ້ນ ແລະປະຊາຊາດທັງປວງອ້ອມຮອບເຮົາກໍ
ເຫັນ ແລ້ວພວກເຂົາກໍນ້ອຍເນື້ອຕ່ຳໃຈ ເພາະພວກເຂົາທັງຫຼາຍຮັບຮູ້ວ່າງານນີ້ໄດ້ສຳເລັດລົງກໍ
ດ້ວຍພຣະເຈົ້າຂອງເຮົາຊ່ວຍເຫຼືອ
[17]ຫຼາຍກວ່ານັ້ນອີກ ໃນຄາວນັ້ນເຈົ້ານາຍທັງຫຼາຍຂອງຢູດາກໍໄດ້ສົ່ງຈົດໝາຍຫຼາຍສະບັບໄປ

ເຖິງ ໂຕບີຢາ ແລະຈົດໝາຍຂອງ ໂຕບີຢາກໍມາເຖິງພວກເຂົາ [18]ເພາະມີຫຼາຍຄົນໃນຢູດາໄດ້ຜູກ
ພັນກັບພວກເຂົາໄວ້ດ້ວຍຄຳປະຕິຍານ ເພາະພວກເຂົາເປັນລູກເຂີຍຂອງ ເຊການີອາ ຜູ້ເປັນລູກ
ຊາຍ ອາຣາ ແລະ ເຢໂຮຮານັນ ລູກຊາຍຂອງລາວກໍໄດ້ຮັບລູກສາວຂອງ ເມຊຸນລຳ ຜູ້ເປັນລູກ
ຊາຍ ເບເຣກີຢາ ເປັນພັນລະຍາຂອງຕົນ [19]ພວກເຂົາເວົ້າເຖິງຄວາມດີຂອງ ໂຕບີຢາຕໍ່ໜ້າຂ້າພະ-
ເຈົ້າດ້ວຍ ແລະລາຍງານຄຳຂອງຂ້າພະເຈົ້າໄປໃຫ້ພວກເຂົາ ໂຕບີຢາກໍໄດ້ສົ່ງຈົດໝາຍຫລາຍ
ສະບັບມາໃຫ້ຂ້າພະເຈົ້າເພື່ອໃຫ້ຢ້ານພວກເຂົາ

# ບົດທີ 7

## ເນເຮມີຢາບໍ່ຍອມພົບກັບຜູ້ວິຈານຕົນ

[1]ຕໍ່ມາເມື່ອສ້າງກຳແພງສຳເລັດແລ້ວ ຂ້າພະເຈົ້າກໍຕັ້ງບານປະຕູໄວ້ ແລະແຕ່ງຕັ້ງຜູ້ເຝົ້າປະຕູ
ນັກຮ້ອງເພງ ແລະແຕ່ງຕັ້ງຄົນ ເລວີໄວ້ [2]ຂ້າພະເຈົ້າໄດ້ແຕ່ງຕັ້ງໃຫ້ຮານານີພີ່ນ້ອງຂອງຂ້າພະ-
ເຈົ້າ ແລະ ຮານານີຢາຜູ້ວ່າການປ້ອມ ເປັນຜູ້ປົກຄອງເມືອງ ເຢຣູຊາເລັມ ເພາະວ່າພວກເຂົາ
ເປັນຄົນສັດຊື່ ແລະຢຳເກງ ພຣະເຈົ້າ ຫຼາຍກວ່າຄົນອື່ນໆ [3]ຂ້າພະເຈົ້າໄດ້ເວົ້າກັບພວກເຂົາວ່າ
"ຢ່າໃຫ້ປະຕູເມືອງ ເຢຣູຊາເລັມ ເປີດຈົນກວ່າແດດຈະຮ້ອນ ແລະ ເມື່ອພວກທ່ານຢືນເຝົ້າຍາມຢູ່
ກໍໃຫ້ປິດ ແລະເອົາດານກັ້ນໄວ້ ຈົ່ງແຕ່ງຕັ້ງເວນຍາມຈາກຊາວເມືອງ ເຢຣູຊາເລັມ ຕ່າງກໍປະຈຳ
ໜ້າທີ່ຂອງພວກເຂົາ ແລະຕ່າງກໍຢືນຍາມຢູ່ກົງກັນຂ້າມກັບເຮືອນຂອງພວກເຂົາ" [4]ເມືອງນັ້ນ
ກວ້າງ ແລະໃຫຍ່ຫລາຍ ແຕ່ຄົນພາຍໃນໜ້ອຍ ແລະເຮືອນກໍຍັງບໍ່ໄດ້ສ້າງ

## ກຳແພງເມືອງໄດ້ສຳເລັດ

[5]ແລ້ວ ພຣະເຈົ້າ ຊົງດົນໃຈຂ້າພະເຈົ້າໃຫ້ເອີ້ນຊຸມນຸມພວກເຈົ້ານາຍ ແລະເຈົ້າໜ້າທີ່ ແລະປະ-
ຊາຊົນ ເພື່ອຈະຂຶ້ນທະບຽນສຳມະໂນຄົວເຊື້ອສາຍ ຂ້າພະເຈົ້າພົບໜັງສືເຊື້ອສາຍຂອງຄົນທັງ-
ຫລາຍທີ່ຂຶ້ນມາໃນເທື່ອກ່ອນ ຂ້າພະເຈົ້າເຫັນຂໍ້ຄວາມຂຽນໄວ້ວ່າ

[6]ຕໍ່ໄປນີ້ ເປັນປະຊາຊົນທີ່ຂຶ້ນມາຈາກການເປັນຊະເລີຍໃນພວກທີ່ຖືກກວາດໄປ ຊຶ່ງ ເນບູ-
ກາດເນັດຊາກະສັດແຫ່ງ ບາບີໂລນ ໄດ້ກວາດໄປ ພວກເຂົາທັງຫຼາຍໄດ້ກັບຄືນມາໃນເມືອງ ເຢຣູ-
ຊາເລັມ ແລະໃນແຂວງຢູດາ ກັບມາຍັງເມືອງຂອງຕົນ

[7]ຄົນທັງຫຼາຍທີ່ໄດ້ກັບຄືນມາກັບ ເຊຣູບາເບນ ເຢຊູອາ ເນເຮມີຢາ ອາຊາຣີຢາ ຣາອາມີຢາ
ນາຮາມານີ ມໍເດກາຍ ບິນຊານ ມິສະເປເຣດ ບິກວາຍ ເນຮູມ ບາອານາ ຈຳນວນຜູ້ຊາຍ
ຂອງປະຊາຊົນອິສຣາເອນມີ: [8]ລູກຫລານຂອງປາໂຣດ - 272 ຄົນ, [9]ລູກຫລານຂອງ ເຊຟາຕີ-
ຢາ - 372 ຄົນ, [10]ລູກຫລານຂອງອາຣາ - 652 ຄົນ, [11]ລູກຫລານຂອງປາຮາດ-ໂມອາບ
ຄືລູກຫລານຂອງ ເຢຊູອາ ແລະໂຢອາບ - 2,818 ຄົນ, [12]ລູກຫລານຂອງ ເອລາມ - 1,254
ຄົນ, [13]ລູກຫລານຂອງຊັດຕຸ - 845 ຄົນ, [14]ລູກຫລານຂອງຊັກກາຍ - 760 ຄົນ, [15]ລູກ
ຫລານຂອງບິນນຸຍ - 648 ຄົນ, [16]ລູກຫລານຂອງ ເບບາຍ - 628 ຄົນ, [17]ລູກຫລານຂອງ
ອາຊະກາດ - 2,322 ຄົນ, [18]ລູກຫລານຂອງອາໂດນີການ - 667 ຄົນ, [19]ລູກຫລານຂອງ
ບິກວາຍ - 2,067 ຄົນ, [20]ລູກຫລານຂອງອາດີນ - 655 ຄົນ, [21]ລູກຫລານຂອງອາເຕ (ມີ

ຊື່ອີກວ່າ ເຣເຊກີຢາ) - 98 ຄົນ, [22]ລູກຫລານຂອງຮາຊຸມ - 328 ຄົນ, [23]ລູກຫລານຂອງເບ-
ຊາຍ - 324 ຄົນ, [24]ລູກຫລານຂອງຮາຣິບ - 112 ຄົນ, [25]ລູກຫລານຂອງກິເບໂອນ - 95
ຄົນ, [26]ຄົນເບັດເລເຮັມ ແລະເນໂຕຟາ - 188 ຄົນ, [27]ຄົນອານາໂທດ - 128 ຄົນ, [28]ຄົນ
ເບັດ-ອາຊະມາເວດ - 42 ຄົນ, [29]ຄົນກີຣິຢາດ-ເຢອາຣິມ ເກຟີຣາ ແລະເບເອໂຣດ - 743
ຄົນ, [30]ຄົນຣາມາ ແລະເກບາ - 621 ຄົນ, [31]ຄົນມິກມາດ - 122 ຄົນ, [32]ຄົນເບັດເອນ
ແລະອາອີ - 123 ຄົນ, [33]ຄົນເນໂບອີກແຫ່ງໜຶ່ງ - 52 ຄົນ, [34]ລູກຫລານຂອງເອລາມອີກ
ຄົນໜຶ່ງ - 1,254 ຄົນ, [35]ລູກຫລານຂອງຮາຣິມ - 320 ຄົນ, [36]ລູກຫລານຂອງເຢຣິໂກ -
345 ຄົນ, [37]ຊາວໂລດ ຊາວຮາດິດ ແລະຊາວໂອໂນ - 721 ຄົນ, [38]ລູກຫລານຂອງເສນາ-
ອາ - 3,930 ຄົນ.

## ຮານານີກັບຜູ້ວ່າການປ້ອມເປັນຜູ້ເບິ່ງແຍງເຢຣູຊາເລັມ

[39]ບັນດາປະໂລຫິດແມ່ນ: ລູກຫລານຂອງເຢດາຢາ ເຊື້ອສາຍຂອງເຢຊູອາ - 973 ຄົນ,
[40]ລູກຫລານຂອງອິມເມ - 1,052 ຄົນ, [41]ລູກຫລານຂອງປັດຊູ - 1,247 ຄົນ, [42]ລູກຫລານ
ຂອງຮາຣິມ - 1,017 ຄົນ.

## ສຳມະໂນຄົວເຊື້ອສາຍຂອງຄົນທີ່ຂຶ້ນມາຈາກບາບີໂລນເທື່ອທຳອິດ

[43]ພວກເລວີແມ່ນ: ລູກຫລານຂອງເຢຊູອາ ຂອງກັດມີເອນ ແລະຂອງໂຮດາວີຢາ - 74
ຄົນ. [44]ບັນດານັກຮ້ອງແມ່ນ: ລູກຫລານຂອງອາສັບ - 148 ຄົນ. [45]ຄົນເຝົ້າປະຕູແມ່ນ: ລູກ
ຫລານຂອງຊານລູມ, ລູກຫລານຂອງອາເຕ, ລູກຫລານຂອງຕັນໂມນ, ລູກຫລານຂອງອັກ-
ກຸບ, ລູກຫລານຂອງຮາຕີຕາ, ລູກຫລານຂອງໂຊບາຍ - 138 ຄົນ.

## ສຳມະໂນຄົວເຊື້ອສາຍຂອງບັນດາປະໂລຫິດ

[46]ຄົນໃຊ້ປະຈຳພຣະວິຫານແມ່ນ: ລູກຫລານຂອງຊີຮາ, ລູກຫລານຂອງຮາສູຟາ, ລູກຫລານ
ຂອງຕັບບາໂອດ, [47]ລູກຫລານຂອງເກໂຣດ, ລູກຫລານຂອງສີອາ, ລູກຫລານຂອງປາໂດນ,
[48]ລູກຫລານຂອງເລບານາ, ລູກຫລານຂອງຮາກາບາ, ລູກຫລານຂອງສັນມາຍ, [49]ລູກຫລານ
ຂອງຮານານ, ລູກຫລານຂອງກິດເດນ, ລູກຫລານຂອງກາຮາ, [50]ລູກຫລານຂອງເຣອາຢາ,
ລູກຫລານຂອງເຣຊິນ, ລູກຫລານຂອງເນໂກດາ, [51]ລູກຫລານຂອງກັດຊຳ, ລູກຫລານຂອງ
ອຸດຊາ, ລູກຫລານຂອງປາເສອາ, [52]ລູກຫລານຂອງເບສາຍ, ລູກຫລານຂອງເມອູນິມ, ລູກ
ຫລານຂອງເນຟຸເຊສິມ, [53]ລູກຫລານຂອງບັກບຸກ, ລູກຫລານຂອງຮາກູຟາ, ລູກຫລານຂອງ
ຮາຣູ, [54]ລູກຫລານຂອງບັດຊະລູດ, ລູກຫລານຂອງເມຮີດາ, ລູກຫລານຂອງຮາຊາ, [55]ລູກ
ຫລານຂອງບາໂກດ, ລູກຫລານຂອງສີເສຣາ, ລູກຫລານຂອງເຕມາ, [56]ລູກຫລານຂອງເນຊີ-
ຢາ, ລູກຫລານຂອງຮາຕີຟາ.

## ສຳມະໂນຄົວເຊື້ອສາຍຂອງຄົນເລວີ

[57]ລູກຫລານຜູ້ຮັບໃຊ້ຂອງໂຊໂລໂມນ: ລູກຫລານຂອງໂສຕາຍ, ລູກຫລານຂອງໂສເຟເຣດ,
ລູກຫລານຂອງເປຣູດາ, [58]ລູກຫລານຂອງຢາອາລາ, ລູກຫລານຂອງດາໂກນ, ລູກຫລານ
ຂອງກິດເດນ, [59]ລູກຫລານຂອງເຊຟາຕີຢາ, ລູກຫລານຂອງຮັດຕິນ, ລູກຫລານຂອງໂປເຄ-

ເຣັດ-ຮັດເຊບາຢີມ, ລູກຫລານຂອງອາໂມນ.
60ຄົນໃຊ້ປະຈຳພຣະວິຫານທັງໝົດ ແລະລູກຫລານຂອງຂ້າລາຊະການຂອງໂຊໂລໂມນ ມີ
ສາມຮ້ອຍເກົ້າສິບສອງຄົນ
61ຕໍ່ໄປນີ້ ເປັນບັນດາຄົນທີ່ຂຶ້ນມາຈາກເຕນ-ເມລາ ເຕນ-ຮາຊາ ເຄຣຸບ ອັດໂດນ ແລະ
ອິມເມ ແຕ່ພວກເຂົາພິສູດບໍ່ໄດ້ວ່າບັນພະບູລຸດຂອງພວກເຂົາເປັນຄົນອິສຣາເອນ ຫຼືບໍ່ 62ລູກ
ຫລານຂອງເດລາຢາ ລູກຫລານຂອງໂຕບີຢາ ລູກຫລານຂອງເນໂກດາ ຫົກຮ້ອຍສີ່ສິບສອງ
ຄົນ 63ຈາກບັນດາປະໂລຫິດແມ່ນ ລູກຫລານຂອງ ໂຮບາຢາ ລູກຫລານຂອງ ຮັກກົດ ລູກ
ຫລານຂອງ ບາຊີລາຍ ຜູ້ມີເມຍຄົນໜຶ່ງເປັນລູກສາວຂອງບາຊີລາຍຄົນກີເລອາດ ຈຶ່ງໄດ້ຊື່
ຕາມນັ້ນ 64ຄົນເຫຼົ່ານີ້ຊອກຫາໜັງສືການລົງທະບຽນຂອງພວກເຂົາໃນທະບຽນສຳມະໂນຄົວ
ເຊື້ອສາຍ ແຕ່ຫາບໍ່ພົບ ຈຶ່ງຖືວ່າເປັນມົນທິນ ແລະຖືກຕັດອອກຈາກຕຳແໜ່ງປະໂລຫິດ 65ຜູ້ວ່າ
ລາຊະການເມືອງສັ່ງຫ້າມພວກເຂົາບໍ່ໃຫ້ກິນສິ່ງຂອງບໍລິສຸດທີ່ສຸດ ຈົນກວ່າຈະມີປະໂລຫິດທີ່ຈະ
ປຶກສາກັບອູຣີມ ແລະທູມມີມເສຍກ່ອນ

### ສຳມະໂນຄົວເຊື້ອສາຍຂອງຄົນໃຊ້ປະຈຳພຣະວິຫານ

66ພວກຊຸມນຸມຊົນທັງໝົດມີສີ່ໝື່ນສອງພັນສາມຮ້ອຍຫົກສິບຄົນ 67ນອກເໜືອຈາກຄົນໃຊ້ຊາຍ
ຍິງຂອງທ່ານຊຶ່ງມີຢູ່ເຈັດພັນສາມຮ້ອຍສາມສິບເຈັດຄົນ ແລະໃນທ່າມກາງພວກເຂົາມີນັກຮ້ອງ
ສອງຮ້ອຍສີ່ສິບຫ້າຄົນທັງຊາຍ ແລະຍິງ

### ສຳມະໂນຄົວເຊື້ອສາຍລູກຫລານຜູ້ຮັບໃຊ້ຂອງໂຊໂລໂມນ

68ມ້າຂອງພວກເຂົາມີເຈັດຮ້ອຍສາມສິບຫົກໂຕ ລໍຂອງພວກເຂົາມີສອງຮ້ອຍສີ່ສິບຫ້າໂຕ
69ອູດຂອງພວກເຂົາມີສີ່ຮ້ອຍສາມສິບຫ້າໂຕ ແລະລາຂອງພວກເຂົາມີຫົກພັນເຈັດຮ້ອຍຊາວໂຕ
70ແລະບາງຄົນໃນພວກເຈົ້ານາຍຂອງບັນພະບູລຸດໄດ້ຖວາຍໃຫ້ແກ່ຜູ້ປົກຄອງ ຖວາຍເຂົ້າພະຄັງ
ເປັນຄຳໜຶ່ງພັນດາຣິກ[ກ] ຊາມຫ້າສິບໜ່ວຍ ເສື້ອປະໂລຫິດຫ້າຮ້ອຍສາມສິບໂຕ 71ແລະພວກ
ເຈົ້ານາຍຂອງບັນພະບູລຸດບາງຄົນຖວາຍໃຫ້ແກ່ພະຄັງ ເປັນຄຳສອງໝື່ນດາຣິກ ເງິນສອງພັນ
ສອງຮ້ອຍມີນາ[ຂ] ເສື້ອສຳລັບປະໂລຫິດຫົກສິບເຈັດໂຕ 72ແລະສິ່ງທີ່ປະຊາຊົນຖວາຍນັ້ນ ມີ
ທອງຄຳສອງໝື່ນດາຣິກ ເງິນສອງພັນມີນາ[ຄ] ແລະເສື້ອປະໂລຫິດຫົກສິບເຈັດໂຕ
73ດັ່ງນັ້ນ ບັນດາປະໂລຫິດ ພວກເລວີ ກັບຄົນເຝົ້າປະຕູ ນັກຮ້ອງ ປະຊາຊົນບາງຄົນ ຄົນ
ໃຊ້ປະຈຳພຣະວິຫານ ແລະຄົນອິສຣາເອນທັງປວງອາໄສຢູ່ໃນຫົວເມືອງຂອງຕົນ ເມື່ອເຖິງ
ເດືອນທີເຈັດ

# ບົດທີ 8

## ຈຳນວນຊຸມນຸມຊົນທັງໝົດ

1ໃນເດືອນທີເຈັດ ຊາວອິສຣາເອນໄດ້ຢາຍກັນຢູ່ຕາມບ້ານເມືອງຂອງພວກເຂົາ ໃນມື້ທີໜຶ່ງ

---

[ກ]ພັນດາຣິກ ຄື 8.5 ກິໂລ (kg) [ຂ]ສອງພັນສອງຮ້ອຍມີນາ ຄື 1,200 ກິໂລ (kg) [ຄ]ສອງພັນມີນາ ຄື 1,100 ກິໂລ (kg)

ຂອງເດືອນນັ້ນ ພວກເຂົາທັງໝົດໄດ້ໂຮມກັນຢູ່ເດີ່ນຕໍ່ໜ້າປະຕູນໍ້າທີ່ນະຄອນ ເຢຣູຊາເລັມ ພວກ
ເຂົາໄດ້ຮ້ອງຂໍປະໂລຫິດ ເອັດຊະຣາ ຜູ້ຮອບຮູ້ໃນດ້ານພຣະທຳທີ່ ພຣະຜູ້ເປັນເຈົ້າ ຊົງມອບໃຫ້
ພວກ ອິສຣາເອນ ຜ່ານທາງ ໂມເຊ. 2ໃຫ້ເພິ່ນນຳເອົາປຶ້ມພຣະທຳອອກມາ ເອັດຊະຣາກໍເອົາປຶ້ມ
ນັ້ນອອກມາ ແລະນຳໄປຍັງບ່ອນທີ່ປະຊາຊົນເຕົ້າໂຮມກັນຢູ່ ມີທັງຜູ້ຊາຍຜູ້ຍິງ ແລະເດັກນ້ອຍທີ່
ເຂົ້າໃຈໄດ້. 3ໃນເດີ່ນຕິດປະຕູນໍ້ານັ້ນ ເອັດຊະຣາໄດ້ອ່ານພຣະທຳແຕ່ເຊົ້າຈົນຮອດທ່ຽງ ພວກ
ເຂົາທຸກຄົນຟັງຢ່າງຕັ້ງອົກຕັ້ງໃຈ.
4ເອັດຊະຣາ ອ່ານຢູ່ເທິງເວທີທີ່ເຮັດດ້ວຍໄມ້ ທີ່ເຂົາເຈົ້າສ້າງຂຶ້ນສຳລັບໂອກາດຢ່າງນີ້ ພວກ
ທີ່ຢືນຢູ່ຂ້າງຂວາຂອງເພິ່ນ ຄື ມັດຕີທີຢາ ເຊມາ ອານາຢາ ອູຣີຢາ ຮິນກີຢາ ແລະ ມາອາ-
ເສຢາ ສ່ວນພວກທີ່ຢືນຢູ່ຂ້າງຊ້າຍຂອງເພິ່ນຄື ເປດາຢາ ມີຊາເອນ ມັນກີຢາ ຮາຊຸມ ຮັດ-
ຊະບັດດານາ ເຊຄາຣີຢາ ແລະ ເມຊຸນລຳ. 5ໃນຂະນະທີ່ ເອັດຊະຣາຢືນຢູ່ເທິງເວທີ ແລະເປີດ
ປຶ້ມອອກມາອ່ານຕໍ່ໜ້າປະຊາຊົນ ທຸກຄົນໄດ້ລຸກຢືນຂຶ້ນ. 6ເອັດຊະຣາຈຶ່ງເວົ້າວ່າ, "ໃຫ້ພວກເຮົາ
ສັນລະເສີນ ພຣະຜູ້ເປັນເຈົ້າ ຜູ້ຊົງເປັນ ພຣະເຈົ້າ ອົງຍິ່ງໃຫຍ່." ປະຊາຊົນທຸກຄົນກໍພາກັນຍົກມື
ຂຶ້ນ ແລະຕອບວ່າ, "ອາແມນ ອາແມນ" ແລ້ວເຂົາເຈົ້າກໍຊຸເຂົ່າລົງ ແລະກົ້ມຂາບນະມັດສະ-
ການ.
7ຕໍ່ມາ ທຸກຄົນໄດ້ລຸກຢືນຂຶ້ນຢູ່ບ່ອນເກົ່າ ແລ້ວຊາວ ເລວີ ບາງຄົນກໍໄດ້ອະທິບາຍພຣະທຳສູ່
ເຂົາເຈົ້າຟັງ ຊາວ ເລວີ ນີ້ຄື ເຢຊູອາ ບານີ ເຊເຣບີຢາ ຢາມິນ ອັກກຸບ ຊັບເບທາຍ ໂຮດີຢາ
ມາອາເສຢາ ເກລີຕາ ອາຊາຣີຢາ ໂຢຊາບັດ ຮານານ ແລະເປລີຢາ. 8ພວກນີ້ໄດ້ແປ ແລະ
ອະທິບາຍພຣະທຳຂອງ ພຣະເຈົ້າ ເພື່ອໃຫ້ປະຊາຊົນເຂົ້າໃຈ.
9ເມື່ອເຂົາເຈົ້າໄດ້ຍິນຂໍ້ພຣະທຳນັ້ນ ພວກເຂົາຮູ້ສຶກຕື້ນເຕັ້ນໃຈ ແລະຮ້ອງໄຫ້ຂຶ້ນແລ້ວ ເນເຮ-
ມີຢາ ເອັດຊະຣາ ແລະຊາວ ເລວີ ຜູ້ອະທິບາຍພຣະທຳຂອງ ພຣະເຈົ້າ ໄດ້ບອກປະຊາຊົນວ່າ, "ມື້-
ນີ້ ເປັນມື້ບໍລິສຸດສຳລັບ ພຣະຜູ້ເປັນເຈົ້າ ຂອງພວກທ່ານ ພວກທ່ານບໍ່ຕ້ອງຮ້ອງໄຫ້ຄໍ່າຄວນ.
10ດຽວນີ້ ໃຫ້ພວກທ່ານພາກັນກັບເມືອກິນເຂົ້າສາ ຈົ່ງແບ່ງປັນອາຫານ ແລະນໍ້າອະງຸ່ນໃຫ້ຜູ້ທີ່ບໍ່
ມີພຽງພໍ ມື້ນີ້ ເປັນມື້ບໍລິສຸດສຳລັບພຣະຜູ້ເປັນເຈົ້າ ສະນັ້ນ ບໍ່ຕ້ອງໂສກເສົ້າ ຄວາມຊື່ນບານທີ່
ພຣະຜູ້ເປັນເຈົ້າຊົງປະທານໃຫ້ພວກທ່ານນັ້ນ ຈະເຮັດໃຫ້ພວກທ່ານມີເຫື່ອແຮງຂຶ້ນ."
11ພວກ ເລວີ ໄດ້ຍ່າງໄປມາທ່າມກາງປະຊາຊົນ ແລະ ເຮັດໃຫ້ພວກ ເຂົາງຽບ ໂດຍ ເວົ້າວ່າ,
"ພາກັນມິດ ແລະຢ່າໄດ້ໂສກເສົ້າ ເພາະວ່າມື້ນີ້ເປັນມື້ບໍລິສຸດ. 12ດັ່ງນັ້ນ ປະຊາຊົນຈຶ່ງກັບເມືອ
ບ້ານ ແລ້ວກິນ ເຂົ້າກິນ ນໍ້າຢ່າງ ມ່ວນຊື່ນ ພວກ ເຂົາ ໄດ້ ແບ່ງປັນສິ່ງທີ່ ເຂົາເຈົ້າ ມີໃຫ້ ແກ່ຄົນອື່ນ
ເພາະວ່າພວກເຂົາເຂົ້າໃຈຕາມທີ່ໄດ້ຟັງເພິ່ນອ່ານນັ້ນ.

## ຊັບສົມບັດຂອງພວກທ່ານ

13ມື້ຕໍ່ມາ ພວກຫົວໜ້າເຜົ່າພ້ອມດ້ວຍປະໂລຫິດແລະພວກ ເລວີ ໄດ້ພາກັນໄປສຶກສາພຣະທຳ
ນຳ ເອັດຊະຣາ. 14ພວກເຂົາໄດ້ເຫັນວ່າ ພຣະທຳທີ່ ພຣະຜູ້ເປັນເຈົ້າ ຊົງມອບໃຫ້ຜ່ານທາງ ໂມເຊ
ສັ່ງໃຫ້ເຂົາເຈົ້າຢູ່ໃນຕູບຊົ່ວຄາວເນື່ອງໃນໂອກາດງານສະຫລອງເດືອນທີ່ເຈັດນັ້ນ. 15ແລ້ວພວກ
ເຂົາກໍສົ່ງຄຳແນະນຳອອກໄປທົ່ວນະຄອນ ເຢຣູຊາເລັມ ແລະທົ່ວຫົວເມືອງ ແລະບ້ານຕ່າງໆ

ວ່າ, “ຈົ່ງອອກໄປເບື້ອງພູນ້ອຍ ແລ້ວເອົາງ່າຕົ້ນໝາກກອກ ງ່າຕົ້ນສົນ ງ່າຕົ້ນໄມ້ຫອມ ງ່າຕົ້ນ
ຕານ ແລະຕົ້ນໄມ້ອື່ນໆ ມາເຮັດຕູບຕາມຄຳແນະນຳທີ່ຂຽນໄວ້ໃນພຣະທຳ.”
16ດັ່ງນັ້ນ ປະຊາຊົນຈຶ່ງເອົາງ່າໄມ້ມາເຮັດຕູບຢູ່ເທິງຫລັງຄາພຽງ ຢູ່ຕາມເດີ່ນບ້ານ ຢູ່ຕາມ
ເດີ່ນພຣະວິຫານ ແລະຕາມບ່ອນໃກ້ປະຕູເອຟຣາຢິມ. 17ປະຊາຊົນທຸກຄົນທີ່ກັບມາຈາກການ
ເປັນຊະເລີຍກໍໄດ້ພາກັນປຸກຕູບ ແລະຢູ່ໃນຕູບນັ້ນ. ນັບຕັ້ງແຕ່ສະໄໝຂອງເຢຊູອາລູກຊາຍຂອງ
ນູນ ແມ່ນເທື່ອທຳອິດທີ່ເຮັດຢ່າງນີ້ ພວກເຂົາຕ່າງກໍຕື່ນເຕັ້ນຍິນດີ. 18ພວກເຂົາອ່ານພຣະທຳ
ຂອງພຣະຜູ້ເປັນເຈົ້າທຸກໆ ມື້ ຕັ້ງແຕ່ມື້ທຳອິດຈົນຮອດມື້ສຸດທ້າຍ ພວກເຂົາສະເຫລີມສະ-
ຫລອງເຈັດມື້ ສ່ວນໃນມື້ທີ່ແປດເປັນພິທີປິດຕາມຄຳແນະນຳ.

# ບົດທີ 9

## ເອັດຊະຣາອ່ານພຣະທຳໃຫ້ປະຊາຊົນຟັງ

1ໃນວັນທີຊາວສີ່ເດືອນນັ້ນ ປະຊາຊົນອິສຣາເອນໄດ້ຊຸມນຸມກັນອົດອາຫານ ແລະນຸ່ງຫົ່ມຜ້າ
ກະສອບ ແລະເອົາດິນໃສ່ຫົວ 2ເຊື້ອສາຍຂອງອິສຣາເອນໄດ້ແຍກຕົວອອກຈາກຄົນຕ່າງຊາດ
ທັງປວງ ແລະຢືນສາລະພາບບາບຂອງຕົນ ແລະສາລະພາບຄວາມຊົ່ວຊ້າແຫ່ງບັນພະບູລຸດ
ຂອງພວກເຂົາ 3ພວກເຂົາໄດ້ລຸກຢືນຂຶ້ນໃນບ່ອນຂອງພວກເຂົາແລະອ່ານໜັງສືພຣະບັນຍັດຂອງ
ພຣະຜູ້ເປັນເຈົ້າ ພຣະເຈົ້າຂອງພວກເຂົາ ຢູ່ລະຫວ່າງສາມຊົ່ວໂມງ ແລະອີກສາມຊົ່ວໂມງ
ພວກເຂົາສາລະພາບ ແລະນະມັດສະການພຣະຜູ້ເປັນເຈົ້າ ພຣະເຈົ້າຂອງພວກເຂົາທັງຫລາຍ

## ງານສະຫລອງຢູ່ຕູບ

4ພວກເລວີ ເຢຊູອາ ບານີ ກັດມີເອນ ເຊບານີຢາ ບຸນນີ ເຊເຣບີຢາ ບານີ ແລະເກນານີ
ໄດ້ຢືນຂຶ້ນທີ່ຂັ້ນໄດ ແລະພວກເຂົາໄດ້ຮ້ອງດ້ວຍສຽງດັງຫາພຣະຜູ້ເປັນເຈົ້າ ພຣະເຈົ້າຂອງ
ພວກເຂົາ

5ແລ້ວຄົນເລວີ ເຢຊູອາ ກັດມີເອນ ບານີ ຮາຊັບເນຢາ ເຊເຣບີຢາ ໂຮດີຢາ ເຊບານີຢາ
ແລະເປທາຮີຢາ ກ່າວວ່າ “ຈົ່ງຢືນຂຶ້ນ ແລະສັນລະເສີນພຣະຜູ້ເປັນເຈົ້າ ພຣະເຈົ້າຂອງທ່ານ
ທັງຫລາຍຕັ້ງແຕ່ການກ່ອນຈົນເຖິງນິລັນດອນສືບໆໄປເປັນນິດ ສາທຸການແດ່ພຣະນາມອັນຮຸ່ງ-
ເຮືອງຂອງພຣະອົງ ຊຶ່ງຍິ່ງໃຫຍ່ເໜືອການໂມທະນາພຣະຄຸນ ແລະການສັນເສີນທັງປວງ
6ພຣະອົງແມ່ນພຣະຜູ້ເປັນເຈົ້າ ແຕ່ອົງດຽວ ພຣະອົງໄດ້ນິລະມິດສ້າງຟ້າສະຫວັນ ຟ້າສະຫວັນ
ອັນສູງສຸດພ້ອມກັບບໍລິວານທັງປວງຂອງຟ້າສະຫວັນນັ້ນ ແຜ່ນດິນໂລກແລະບັນດາສິ່ງທີ່ຢູ່ໃນ
ໂລກນັ້ນ ທະເລ ແລະບັນດາສິ່ງທີ່ຢູ່ໃນນ້ຳນັ້ນ ແລະພຣະອົງຊົງຮັກສາສິ່ງທັງປວງເຫຼົ່ານັ້ນໄວ້
ແລະບໍລິວານຂອງຟ້າສະຫວັນ ໄດ້ນະມັດສະການພຣະອົງ

7ພຣະອົງແມ່ນພຣະຜູ້ເປັນເຈົ້າ ພຣະເຈົ້າຜູ້ຊົງເລືອກອັບຣາມ ແລະຊົງນຳທ່ານອອກມາ
ຈາກເມືອງອູເຣໃນປະເທດ ຄັນເດອາ (ບາບີໂລນ) ແລະຊົງປະທານນາມທ່ານວ່າອັບຣາຮາມ
8ພຣະອົງໄດ້ຊົງພົບເຫັນນ້ຳໃຈຂອງເພິ່ນສັດຊື່ຕໍ່ພຣະພັກພຣະອົງ ແລະພຣະອົງໄດ້ຊົງກະທຳພັນ-
ທະສັນຍາກັບເພິ່ນວ່າຈະປະທານແຜ່ນດິນຂອງຄົນການາອານ ຄົນຮິດຕີ ຄົນອະໂມຣິດ ຄົນ

ເປຣີຊີ ຄົນເຢບຸດ ແລະຄົນກີກາຊີໃຫ້ແກ່ເຊື້ອສາຍຂອງເພິ່ນ ພຣະອົງກະທຳໃຫ້ຄຳສັນຍາ
ຂອງພຣະອົງສຳເລັດ ເພາະພຣະອົງພໍພຣະໄທ

9ແລະພຣະອົງໄດ້ເຫັນຄວາມທຸກໃຈຂອງບັນພະບູລຸດຂອງຂ້າພະອົງໃນອີຢີບ ໂດຍຟັງສຽງ
ຮ້ອງທຸກຂອງພວກເຂົາທັງຫຼາຍທີ່ທະເລແດງ 10ພຣະອົງຊົງກະທຳໝາຍສຳຄັນ ແລະການອັດ-
ສະຈັນສູ້ຟາຣາໂອ ກັບຂ້າລາຊະການທັງໝົດ ຕໍ່ປະຊາຊົນທັງໝົດແຫ່ງແຜ່ນດິນຂອງຟາຣາໂອ
ເພາະພຣະອົງຊົງຮູ້ວ່າພວກເຂົາທັງຫຼາຍໄດ້ປະພຶດຢ່າງຈອງຫອງຕໍ່ບັນພະບູລຸດຂອງຂ້າພະອົງ
ແລະພຣະນາມຂອງພຣະອົງກໍຊ່າລືໂດງດັງໄປຈົນເຖິງທຸກມື້ນີ້ 11ພຣະອົງໄດ້ຊົງໃຫ້ທະເລ ແຍກ
ອອກຕໍ່ໜ້າພວກເຂົາ ພວກເຂົາຈຶ່ງຍ່າງໄປກາງທະເລເທິງດິນແຫ້ງ ແລະພຣະອົງໄດ້ແກວ່ງຜູ້
ຂົ່ມເຫງພວກເຂົາລົງໃນບ່ອນເລິກເໝືອນກັບຊົງແກວ່ງຫີນລົງໄປໃນມະຫາສະໝຸດ 12ຫຼາຍກວ່າ
ນັ້ນອີກ ພຣະອົງຊົງນຳພາພວກເຂົາໄປໃນກາງເວັນດ້ວຍເສົາເມກ ແລະໃນກາງຄືນດ້ວຍເສົາໄຟ
ເພື່ອໃຫ້ແສງສະຫວ່າງແກ່ພວກເຂົາໃນທາງທີ່ພວກເຂົາຄວນຈະໄປ

13ພຣະອົງໄດ້ສະເດັດລົງມາເທິງພູເຂົາຊີນາຍ ແລະກ່າວກັບພວກເຂົາຈາກຟ້າສະຫວັນ ຊົງ
ປະທານຄຳຕັດສິນ (ຂໍ້ບັງຄັບ) ອັນສັດຊື່ ແລະພະບັນຍັດທີ່ແທ້ຈິງ ກົດເກນແລະພະບັນຍັດທີ່ດີ
ແກ່ພວກເຂົາ 14ພຣະອົງຊົງໃຫ້ພວກເຂົາຮູ້ເຖິງວັນສະບາໂຕບໍລິສຸດຂອງພຣະອົງ ແລະຊົງບັນ-
ຊາຂໍ້ບັງຄັບ ກົດເກນ ແລະພຣະບັນຍັດທາງໂມເຊຜູ້ຮັບໃຊ້ຂອງພຣະອົງ 15ພຣະອົງປະທານ
ອາຫານແກ່ພວກເຂົາຈາກຟ້າສະຫວັນເພື່ອແກ້ຄວາມຫິວ ແລະຊົງໃຫ້ນ້ຳອອກມາຈາກຫີນໃຫ້
ພວກເຂົາແກ້ກະຫາຍນ້ຳ ທັງຊົງສັນຍາໄວ້ວ່າຈະໃຫ້ພວກເຂົາເຂົ້າໄປຍຶດແຜ່ນດິນຊຶ່ງພຣະອົງຊົງ
ປະຕິຍານວ່າຈະປະທານໃຫ້ພວກເຂົານັ້ນ

16ແຕ່ວ່າພວກເຂົາຄືບັນພະບູລຸດຂອງຂ້າພະອົງທັງຫຼາຍໄດ້ປະພຶດຢ່າງຈອງຫອງ ແລະແຂງ
ຄໍຂອງພວກເຂົາ ໂດຍບໍ່ໄດ້ເຊື່ອຟັງພຣະບັນຍັດຂອງພຣະອົງ 17ພວກເຂົາທັງຫຼາຍປະຕິເສດບໍ່
ເຊື່ອຟັງ ແລະບໍ່ສົນໃຈໃນການອັດສະຈັນຊຶ່ງພຣະອົງໄດ້ກະທຳຂຶ້ນທ່າມກາງພວກເຂົາແຕ່ພວກ
ເຂົາແຂງຄໍຂອງຕົນ ແລະໃນການກະບົດນັ້ນ ພວກເຂົາໄດ້ແຕ່ງຕັ້ງຫົວໜ້າເພື່ອຈະກັບໄປສູ່
ຄວາມເປັນຂ້າທາດຂອງພວກເຂົາ ແຕ່ວ່າຝ່າຍພຣະອົງຊົງເປັນພຣະເຈົ້າພ້ອມທີ່ຈະໃຫ້ອະໄພ ມີ
ພຣະໄທເມດຕາ ແລະກະລຸນາ ຊົງພຣະພິໂລດຊ້າ ແລະເຕັມໄປດ້ວຍຄວາມເມດຕາ ໂດຍບໍ່ໄດ້
ປະຖິ້ມພວກເຂົາ 18ເຖິງແມ່ນວ່າພວກເຂົາທັງຫຼາຍໄດ້ສ້າງຮູບງົວໄວ້ສຳລັບຕົນ ແລະກ່າວວ່າ 'ນີ້
ຄືພຣະເຈົ້າຂອງເຈົ້າ ຜູ້ຊົງນຳເຈົ້າຂຶ້ນມາຈາກເອຢິບ ແລະໄດ້ໝິ່ນປະໝາດຢ່າງໃຫຍ່ຫຼວງ

19ດ້ວຍພຣະກະລຸນາອັນຍິ່ງໃຫຍ່ຂອງພຣະອົງ ພຣະອົງກໍບໍ່ໄດ້ປະຖິ້ມພວກເຂົາໃນຖິ່ນແຫ້ງ-
ແລ້ງກັນດານ ເສົາເມກຊຶ່ງນຳໜ້າພວກເຂົາໃນກາງເວັນບໍ່ໄດ້ໜີໄປຈາກພວກເຂົາ ເສົາໄຟໃນ
ກາງຄືນຊຶ່ງໃຫ້ແສງສະຫວ່າງແກ່ພວກເຂົາຕາມທາງຊຶ່ງພວກເຂົາຄວນຈະໄປກໍບໍ່ໄດ້ໜີໄປເຊັ່ນ
ກັນ 20ພຣະອົງປະທານພຣະວິນຍານອັນປະເສີດໃຫ້ສັ່ງສອນພວກເຂົາ ແລະບໍ່ໄດ້ຍັບຍັ້ງມານາ
ຂອງພຣະອົງຈາກປາກຂອງພວກເຂົາທັງຫຼາຍ ທັງຊົງປະທານນ້ຳແກ້ຫິວກະຫາຍແກ່ພວກເຂົາ
21ແລະພຣະອົງໄດ້ບຳລຸງລ້ຽງພວກເຂົາທັງຫຼາຍໃນຖິ່ນແຫ້ງແລ້ງກັນດານລະຫວ່າງສີ່ສິບປີ ພວກ
ເຂົາບໍ່ໄດ້ຂາດສິ່ງໃດເລີຍ ເສື້ອຜ້າຂອງພວກເຂົາບໍ່ຈີກຂາດ ແລະຕີນຂອງພວກເຂົາບໍ່ໄດ້ບວມ

ຊ້ຳ

[22]ຫຼາຍໄປກວ່ານັ້ນອີກ ພຣະອົງໄດ້ມອບລາຊະອານາຈັກ ແລະຊົນຊາດທັງຫຼາຍແກ່ພວກເຂົາ
ແລະຊົງແບ່ງປັນໃຫ້ພວກເຂົາຕາມເຂດແດນ ພວກເຂົາຈຶ່ງໄດ້ຍຶດແຜ່ນດິນແຫ່ງສີໂຮນ ແລະ
ແຜ່ນດິນຂອງກະສັດແຫ່ງເມືອງເຮັດຊະໂບນ ແລະແຜ່ນດິນຂອງໂອກກະສັດແຫ່ງເມືອງບາ-
ຊານ [23]ພຣະອົງໃຫ້ລູກຫລານຂອງພວກເຂົາເພີ່ມທະວີຂຶ້ນຢ່າງດວງດາວໃນທ້ອງຟ້າ ແລະ
ພຣະອົງຊົງນຳພວກເຂົາເຂົ້າໄປໃນແຜ່ນດິນ ຊຶ່ງພຣະອົງຊົງສັນຍາໄວ້ກັບບັນພະບູລຸດຂອງພວກ
ເຂົາໃຫ້ເຂົ້າໄປຍຶດເອົານັ້ນ [24]ພວກລູກຫລານເຫຼົ່ານັ້ນ ຈຶ່ງເຂົ້າໄປ ແລະຍຶດແຜ່ນດິນນັ້ນ ພຣະ-
ອົງຊົງປາບປາມຊາວແຜ່ນດິນນັ້ນ ຄືຄົນ**ການາອານ**ໃຫ້ພົ້ນໜ້າພວກເຂົາ ແລະຊົງມອບຄົນ**ກາ-
ນາອານ**ທັງຫຼາຍໄວ້ໃນມືຂອງພວກເຂົາ ພ້ອມກັບກະສັດ ແລະຊົນຊາດທັງຫຼາຍແຫ່ງແຜ່ນດິນ
ນັ້ນໃຫ້ໄດ້ກະທຳແກ່ຄົນເຫຼົ່ານັ້ນຕາມຄວາມພໍໃຈຂອງພວກເຂົາ [25]ພວກເຂົາຈຶ່ງເຂົ້າຍຶດຫົວເມືອງ
ທີ່ມີກຳແພງ ແລະແຜ່ນດິນທີ່ອຸດົມສົມບູນ ແລະຖືກຳມະສິດເຮືອນຊຶ່ງເຕັມໄປດ້ວຍຂອງດີທັງ
ປວງ ທັງບ່ອນເກັບນ້ຳຊຶ່ງສະກັດໄວ້ ສວນອະງຸ່ນ ສວນໝາກກອກເທດ ແລະຕົ້ນໝາກໄມ້
ຫລວງຫລາຍ ພວກເຂົາຈຶ່ງໄດ້ກິນອີ່ມຈົນອ້ວນພີ ແລະຊົມຊື່ນຍິນດີໃນພຣະຄຸນອັນຍິ່ງໃຫຍ່ຂອງ
ພຣະອົງ

[26]ເຖິງປານນັ້ນ ພວກເຂົາບໍ່ເຊື່ອຟັງ ແລະໄດ້ກະບົດຕໍ່ພຣະອົງ ໂດຍແກວ່ງພຣະບັນຍັດຂອງ
ພຣະອົງໄວ້ເບື້ອງຫຼັງ ແລະໄດ້ຂ້າຜູ້ທຳນວາຍຂອງພຣະອົງ ຜູ້ຊຶ່ງໄດ້ຕັກເຕືອນພວກເຂົາເພື່ອໃຫ້
ກັບມາຫາພຣະອົງ ທັງໄດ້ກະທຳການໝິ່ນປະໝາດຢ່າງໃຫຍ່ຫຼວງ [27]ເພາະສະນັ້ນ ພຣະອົງໄດ້
ມອບພວກເຂົາໄວ້ໃນມືສັດຕູຂອງພວກເຂົາ ຜູ້ຊຶ່ງກະທຳໃຫ້ພວກເຂົາທົນທຸກ ແລະໃນເວລາແຫ່ງ
ການທົນທຸກຂອງພວກເຂົານັ້ນ ພວກເຂົາໄດ້ຮ້ອງທູນຕໍ່ພຣະອົງ ແລະພຣະອົງຊົງຟັງພວກເຂົາ
ຈາກຟ້າສະຫວັນ ພຣະອົງໄດ້ປະທານບັນດາຜູ້ຊ່ວຍແກ່ພວກເຂົາ ຜູ້ໄດ້ຊ່ວຍພວກເຂົາໃຫ້ພົ້ນ
ຈາກມືສັດຕູຂອງພວກເຂົາຕາມພຣະກະລຸນາອັນຍິ່ງໃຫຍ່ຂອງພຣະອົງ

[28]ແຕ່ເມື່ອພວກເຂົາພັກສະຫງົບແລ້ວ ພວກເຂົາກໍກະທຳຄວາມຊົ່ວຕໍ່ພຣະພັກພຣະອົງອີກ
ພຣະອົງຈຶ່ງຊົງມອບພວກເຂົາໄວ້ໃນມືສັດຕູຂອງພວກເຂົາ ສັດຕູຈຶ່ງໄດ້ປົກຄອງພວກເຂົາ ເຖິງ
ປານນັ້ນ ເມື່ອພວກເຂົາຫັນມາຮ້ອງທູນຕໍ່ພຣະອົງ ຝ່າຍພຣະອົງຊົງໄດ້ຍິນພວກເຂົາຈາກຟ້າສະ-
ຫວັນ ແລະຊົງຊ່ວຍພວກເຂົາໃຫ້ພົ້ນຫຼາຍເທື່ອຫຼາຍຄາວ ຕາມພຣະກະລຸນາຂອງພຣະອົງ
[29]ພຣະອົງຊົງຕັກເຕືອນພວກເຂົາ ເພື່ອວ່າຈະຫັນພວກເຂົາໃຫ້ກັບມາສູ່ພຣະບັນຍັດຂອງພຣະອົງ
ແຕ່ພວກເຂົາກໍຍັງປະພຶດຢ່າງຈອງຫອງອວດດີ ບໍ່ຍອມເຊື່ອຟັງພຣະບັນຍັດຂອງພຣະອົງ ແຕ່ໄດ້
ກະທຳຜິດຕໍ່ຄຳຕັດສິນຂອງພຣະອົງ ແລະໄດ້ຫັນໜີ ເຮັດຄໍແຂງເຂົ້າສູ້ ແລະບໍ່ໄດ້ເຊື່ອຟັງ
[30]ພຣະອົງຊົງອົດທົນກັບພວກເຂົາຢູ່ຫຼາຍປີ ຊົງເຕືອນພວກເຂົາດ້ວຍ**ພຣະວິນຍານ**ຂອງພຣະອົງ
ຜ່ານທາງຜູ້ທຳນວາຍຂອງພຣະອົງ ພວກເຂົາກໍຍັງບໍ່ຫງ່ຽງຫູຟັງ ເພາະສະນັ້ນ ພຣະອົງຈຶ່ງມອບ
ພວກເຂົາໄວ້ໃນມືຂອງຊົນຊາດທັງຫຼາຍແຫ່ງແຜ່ນດິນນັ້ນ [31]ເຖິງປານນັ້ນ ດ້ວຍພຣະກະລຸນາ
ອັນຍິ່ງໃຫຍ່ຂອງພຣະອົງ ພຣະອົງບໍ່ໄດ້ຊົງກະທຳໃຫ້ພວກເຂົາຈົບຫາຍ ແລະບໍ່ໄດ້ປະຖິ້ມພວກ
ເຂົາ ເພາະຊົງເປັນ**ພຣະເຈົ້າ**ຜູ້ຊົງພຣະເມດຕາ ແລະພຣະກະລຸນາ

[32]ຂ້າແດ່ພຣະເຈົ້າຂອງຂ້າພະອົງທັງຫຼາຍ ຊຶ່ງເປັນພຣະເຈົ້າອົງຍິ່ງໃຫຍ່ ຊົງລິດເດດ ແລະ
ເປັນທີ່ຢຳເກງ ຜູ້ຊົງຮັກສາພັນທະສັນຍາ ແລະຄວາມເມດຕາ ສະນັ້ນ ບັດນີ້ຂໍພຣະອົງຢ່າໄດ້
ເຫັນວ່າຄວາມທຸກຍາກລຳບາກທັງໝົດນັ້ນ ເປັນພຽງແຕ່ສິ່ງເລັກນ້ອຍຊຶ່ງບັງເກີດຂຶ້ນກັບຂ້າພະ-
ອົງທັງຫຼາຍ ກັບບັນດາກະສັດຂອງຂ້າພະອົງ ບັນດາເຈົ້ານາຍ ບັນດາປະໂລຫິດ ບັນດາຜູ້ທຳ-
ນວາຍບັນພະບູລຸດ ແລະຊົນຊາດຂອງພຣະອົງທັງໝົດ ຕັ້ງແຕ່ສະໄໝກະສັດອັດຊີເຣຍ ຈົນ
ຮອດມື້ນີ້ [33]ແຕ່ໃນບັນດາສິ່ງທີ່ເກີດຂຶ້ນແກ່ຂ້າພະອົງທັງຫຼາຍ ພຣະອົງຊົງຍຸດຕິທຳ ເພາະວ່າ
ພຣະອົງກະທຳກິດຢ່າງສັດຊື່ ແຕ່ຂ້າພະອົງທັງຫຼາຍປະພຶດຢ່າງຊົ່ວຮ້າຍ [34]ບັນດາກະສັດ ເຈົ້າ
ນາຍ ປະໂລຫິດ ແລະບັນພະບູລຸດຂອງຂ້າພະອົງທັງຫຼາຍ ບໍ່ໄດ້ຖືຮັກສາພຣະບັນຍັດຂອງ
ພຣະອົງ ບໍ່ເຊື່ອຟັງພຣະບັນຍັດຂອງພຣະອົງ ແລະພຣະໂອວາດຂອງພຣະອົງ ຊຶ່ງພຣະອົງກ່າວ
ເຕືອນພວກຂ້າພະອົງ [35]ເພາະພວກເຂົາທັງຫຼາຍບໍ່ໄດ້ບົວລະບັດພຣະອົງໃນລາຊະອານາຈັກ
ຂອງພວກເຂົາ ໃນພຣະຄຸນອັນຍິ່ງໃຫຍ່ຂອງພຣະອົງ ຊຶ່ງພຣະອົງຊົງປະທານແກ່ພວກເຂົາ
ແລະໃນແຜ່ນດິນບ່ອນທີ່ກວ້າງໃຫຍ່ ແລະອຸດົມສົມບູນ ຊຶ່ງພຣະອົງຍົກໃຫ້ແກ່ພວກເຂົາ ພວກ
ເຂົາບໍ່ໄດ້ຫັນກັບຈາກການຊົ່ວຮ້າຍຂອງພວກເຂົາ

[36]ເບິ່ງແມ ມື້ນີ້ຂ້າພະອົງທັງຫຼາຍເປັນຂ້າທາດໃນແຜ່ນດິນທີ່ພຣະອົງປະທານແກ່ບັນພະບູລຸດ
ຂອງພວກຂ້າພະອົງ ເພື່ອໃຫ້ໄດ້ຮັບປະທານພືດຜົນກັບສິ່ງຂອງອັນດີຂອງມັນ ເບິ່ງແມ ຂ້າພະ-
ອົງທັງຫຼາຍເປັນຂ້າທາດໃນແຜ່ນດິນນັ້ນ [37]ຜະລິດຜົນອັນຫຼວງຫຼາຍຂອງແຜ່ນດິນນັ້ນກໍຕົກເປັນ
ຂອງກະສັດຜູ້ທີ່ພຣະອົງຊົງຕັ້ງໄວ້ ເໜືອພວກຂ້າພະອົງດ້ວຍບາບຂອງຂ້າພະອົງທັງຫຼາຍ ພວກ
ເຂົາມີອຳນາດເໜືອຮ່າງກາຍ ແລະ ເໜືອຝູງສັດຂອງພວກຂ້າພະອົງ ຕາມຄວາມພໍໃຈຂອງ
ພວກເຂົາ ແລະພວກຂ້າພະອົງກໍຂັດສົນເຫຼືອຫຼາຍ

[38]ເພາະບັນດາສິ່ງເຫຼົ່ານີ້ເຮົາທັງຫຼາຍຈຶ່ງກະທຳພັນທະສັນຍາໝັ້ນຄົງ ແລະບັນທຶກໄວ້ ພວກ
ເຈົ້ານາຍຄົນເລວີແລະປະໂລຫິດຂອງພວກເຮົາຈຶ່ງປະທັບກາປະທັບຂອງພວກເຂົາໄວ້”

# ບົດທີ 10

[1]ບັນດາຜູ້ທີ່ປະທັບຕາຂອງພວກເຂົາໄວ້ແມ່ນ ເນເຮມີຢາຜູ້ປົກຄອງ ຜູ້ເປັນລູກຊາຍຮາກາລີ-
ຢາ ເຊເດກີຢາ [2]ເສຣາຢາ ອາຊາຣີຢາ ເຢເຣມີຢາ [3]ປັດຊູ ອາມາຣີຢາ ມັນກີຢາ [4]ຮັດຕຸຊະ
ເຊບານີຢາ ມັນລຸກ [5]ຮາຣິມ ເມເຣໂມດ ໂອບາດີຢາ [6]ດານີເອນ ກິນເນໂທນ ບາຣຸກ [7]ເມ-
ຊຸນລຳ ອາບີຢາ ມີຢາມິນ [8]ມາອາຊີຢາ ບິນກາຍ ເຊມາຢາ ຄົນເຫລົ່ານີ້ເປັນປະໂລຫິດ
[9]ແລະຄົນເລວີຄື ເຢຊູອາຜູ້ເປັນລູກຊາຍອາຊານີຢາ ບິນນຸຍລູກຫລານເຮນາດາດ ກັດມີເອນ
[10]ແລະພີ່ນ້ອງຂອງພວກເຂົາ ເຊບານີຢາ ໂຮດີຢາ ເກລີຕາ ເປລາຢາ ຮານານ [11]ມີກາ ເຣ-
ໂຮບ ຮາຊາບີຢາ [12]ຊາກູເຣ ເຊເຣບີຢາ ເຊບານີຢາ [13]ໂຮດີຢາ ບານີ ເບນີນູ

[14]ບັນດາຫົວໜ້າຂອງປະຊາຊົນຄື ປາໂຣດ ປາຮາດໂມອາບ ເອລາມ ຊັດຕຸ ບານີ [15]ບຸນນີ
ອາຊະກາດ ເບບາຍ [16]ອາໂດນີຢາ ບິກວາຍ ອາດິນ [17]ອາເຕ ເຮເຊກີຢາ ອັດຊູເຣ [18]ໂຮດີ-
ຢາ ຮາຊຸມ ເບຊາຍ [19]ຮາຣິບ ອານາໂທດ ເນບາຍ [20]ມັກປຽດ ເມຊຸນລຳ ເຮຊີ [21]ເມເຊດ-

ຊະເບນ ຊາໂດກ ຢັດດູອາ [22]ເປລາຕີຢາ ຮານານ ອານາຢາ [23]ໂຮເຊອາ ຮານານີຢາ ຮັດ-
ຊຸບ [24]ຮັນໂລເຮັດ ປີນຮາ ໂຊເບັກ [25]ເຣຮູມ ຮາຊັບນາ ມາອາເສຢາ [26]ອາຮີຢາ ຮານານ
ອານານ [27]ມັນລຸກ ຮາຣິມ ບາອານາ

[28]ສ່ວນປະຊາຊົນນອກນັ້ນ ບັນດາປະໂລຫິດ ຄົນເລວີ ຄົນເຝົ້າປະຕູ ນັກຮ້ອງ ຄົນໃຊ້ປະ-
ຈຳພຣະວິຫານ ແລະຄົນທັງປວງຜູ້ໄດ້ແຍກຕົວອອກຈາກຊົນຊາດທັງຫຼາຍຂອງແຜ່ນດິນເຫຼົ່ານັ້ນ
ມາຖືພຣະບັນຍັດຂອງພຣະເຈົ້າ ທັງເມຍຂອງພວກເຂົາ ລູກຊາຍລູກສາວຂອງພວກເຂົາແລະ
ຄົນທັງປວງ ຜູ້ມີຄວາມຮູ້ ຄວາມເຂົ້າໃຈ [29]ໄດ້ສົມທົບກັບພີ່ນ້ອງຂອງພວກເຂົາ ກັບຜູ້ໃຫຍ່ຂອງ
ພວກເຂົາ ເຂົ້າໃນການສາບແຊ່ງ ແລະໃນການປະຕິຍານທີ່ຈະດຳເນີນຕາມພຣະບັນຍັດຂອງ
ພຣະເຈົ້າ ຊຶ່ງມອບໄວ້ທາງໂມເຊຜູ້ຮັບໃຊ້ຂອງພຣະເຈົ້າ ແລະຈະປະຕິບັດຕາມພຣະບັນຍັດທັງ
ໝົດຂອງພຣະຜູ້ເປັນເຈົ້າ ອົງເປັນພຣະເຈົ້າຂອງເຮົາ ແລະຕາມຄຳຕັດສິນ ກັບກົດເກນຂອງ
ພຣະອົງ

[30]ເຮົາທັງຫຼາຍຈະບໍ່ຍົກລູກສາວຂອງເຮົາໃຫ້ແກ່ຊົນຊາດທັງຫຼາຍຂອງແຜ່ນດິນນັ້ນ ແລະບໍ່ຮັບ
ລູກສາວຂອງພວກເຂົາໃຫ້ແກ່ລູກຊາຍຂອງເຮົາ [31]ແລະຖ້າຊົນຊາດທັງຫຼາຍຂອງແຜ່ນດິນນັ້ນນຳ
ເຄື່ອງໃຊ້ຫລືເຂົ້າມາຂາຍໃນວັນສະບາໂຕ ເຮົາຈະບໍ່ຊື້ຈາກພວກເຂົາໃນວັນສະບາໂຕໃນມື້ແຫ່ງ
ຄວາມບໍລິສຸດ ແລະເຮົາຈະບໍ່ເກັບຜົນຂອງປີທີເຈັດ ແລະບໍ່ເກັບໜີ້ສິນທຸກຢ່າງ [32]ແລະເຮົາທັງ-
ຫຼາຍກຳນົດກັບຕົວເຮົາໄວ້ວ່າຈະຕ້ອງໃຊ້ເງິນເປັນຫຼາຍປີໃຫ້ຄົນລະໜຶ່ງສ່ວນ ສາມເຊເຂ ເພື່ອ
ການບົວລະບັດໃນພຣະວິຫານຂອງພຣະເຈົ້າຂອງເຮົາ [33]ສຳລັບເຂົ້າຈີ່ທີ່ວາງໄວ້ເປັນແຖວຕໍ່ໜ້າ
ພຣະພັກ ສຳລັບເຄື່ອງບູຊາພືດຜົນເປັນເມັດຖວາຍຢູ່ບໍ່ຂາດ ມື້ຂຶ້ນໜຶ່ງຄ່ຳໃນເດືອນອອກໃໝ່ໃນ
ວັນສະບາໂຕ ເທດສະການກຳນົດຕ່າງໆ ສິ່ງຂອງບໍລິສຸດ ແລະເຄື່ອງບູຊາໄຖ່ບາບເພື່ອໄຖ່
ໂທດບາບຂອງພວກອິສຣາເອນ ແລະສຳລັບວຽກງານທຸກຢ່າງໃນພຣະວິຫານຂອງພຣະເຈົ້າ
ຂອງເຮົາທັງຫຼາຍ

[34]ເຮົາໄດ້ຈັບສະຫຼາກ ຄືບັນດາປະໂລຫິດ ຄົນເລວີ ແລະປະຊາຊົນທັງຫຼາຍເພື່ອເອົາຟືນ
ຖວາຍນຳເຂົ້າມາໃນພຣະວິຫານຂອງພຣະເຈົ້າຂອງເຮົາ ຕາມຄອບຄົວບັນພະບູລຸດຂອງເຮົາ
ຕາມເວລາກຳນົດເປັນປີໆໄປ ເພື່ອເຜົາເທິງແທ່ນບູຊາແຫ່ງພຣະຜູ້ເປັນເຈົ້າ ພຣະເຈົ້າຂອງເຮົາ
ຕາມທີ່ບັນທຶກໄວ້ໃນພຣະບັນຍັດ [35]ແລະເພື່ອນຳຜົນທຳອິດແຫ່ງທີ່ດິນຂອງເຮົາ ແລະຜົນທຳອິດ
ຂອງໝາກໄມ້ທັງໝົດທຸກປີ ມາຍັງພຣະວິຫານຂອງພຣະຜູ້ເປັນເຈົ້າ [36]ແລະຈະນຳລູກຊາຍກົກ
ແລະສັດທົວປີຂອງເຮົາ ຕາມທີ່ບັນທຶກໄວ້ໃນພຣະບັນຍັດ ແລະລູກກົກແຫ່ງຝູງງົວ ຝູງແກະ
ຂອງເຮົາມາຍັງພຣະວິຫານຂອງພຣະເຈົ້າຂອງເຮົາ ມາຫາປະໂລຫິດຜູ້ບົວລະບັດຢູ່ໃນພຣະວິ-
ຫານແຫ່ງພຣະເຈົ້າ [37]ແລະຈະນຳຍອດແປ້ງປຽກຂອງເຮົາ ສິ່ງບໍລິຈາກຂອງເຮົາ ໝາກໄມ້ຂອງ
ຕົ້ນໄມ້ທຸກຕົ້ນ ນ້ຳອະງຸ່ນ ແລະນ້ຳມັນ ມາຍັງບັນດາປະໂລຫິດ ມາຍັງຫ້ອງພຣະວິຫານຂອງ
ພຣະເຈົ້າ ແລະຈະນຳໜຶ່ງສ່ວນສິບຈາກແຜ່ນດິນຂອງເຮົາມາໃຫ້ແກ່ພວກເລວີ ເພາະພວກເລວີ
ເປັນ ຜູ້ ເກັບ ໜຶ່ງ ສ່ວນ ສິບ ແຫ່ງ ວຽກ ງານ ຂອງ ເຮົາ ຈາກ ທົ່ວ ເມືອງ ຊົນນະບົດ ທັງ ໝົດ ຂອງ ເຮົາ
[38]ແລະປະໂລຫິດ ລູກຫລານຂອງອາໂຣນ ຈະຢູ່ກັບພວກເລວີ ເມື່ອພວກເລວີໄດ້ຮັບໜຶ່ງສ່ວນ

ສິບ ພວກ ເລວີ ຈະນຳໜຶ່ງສ່ວນສິບຂອງໜຶ່ງສ່ວນສິບມາຍັງພຣະວິຫານຂອງ ພຣະເຈົ້າ ຂອງເຮົາ
ມາໃນຫ້ອງຄັງ 39ເພາະວ່າປະຊາຊົນ ອິສຣາເອນ ແລະພວກ ເລວີ ຈະນຳສ່ວນບໍລິຈາກເປັນເຂົ້າ
ນ້ຳອະງຸ່ນໃໝ່ ແລະນ້ຳມັນ ມາໃນຫ້ອງຊຶ່ງເປັນບ່ອນເກັບເຄື່ອງໃຊ້ຂອງສະຖານທີ່ບໍລິສຸດ ແລະ
ບ່ອນຢູ່ຂອງປະໂລຫິດຜູ້ປົວລະບັດ ຄົນເຝົ້າປະຕູ ແລະນັກຮ້ອງ ເຮົາຈະບໍ່ເພີກເສີຍຕໍ່ພຣະວິ-
ຫານຂອງ ພຣະເຈົ້າ ຂອງເຮົາ

# ບົດທີ 11

## ການສາລະພາບ ການຖືສິນອົດອາຫານ ແລະການກັບໃຈໃໝ່

1ພວກເຈົ້ານາຍຂອງປະຊາຊົນທີ່ອາໄສຢູ່ໃນ ເມືອງ ເຢຣູຊາເລັມ ແລະປະຊາຊົນນອກນັ້ນໄດ້
ຈັບສະຫລາກກັນ ເພື່ອຈະນຳເອົາຄົນສ່ວນໜຶ່ງໃນສິບສ່ວນໃຫ້ເຂົ້າໄປຢູ່ໃນ ເມືອງ ເຢຣູຊາເລັມ
ນະຄອນບໍລິສຸດ ອີກເກົ້າສ່ວນນັ້ນໃຫ້ຢູ່ໃນຫົວເມືອງຕ່າງໆ 2ແລະປະຊາຊົນໄດ້ອວຍພອນໃຫ້
ແກ່ບັນດາຜູ້ທີ່ສະໝັກໃຈໄປຢູ່ໃນເມືອງ ເຢຣູຊາເລັມ

3ຕໍ່ໄປນີ້ເປັນຫົວໜ້າໃນ ແຂວງທີ່ມາອາໄສຢູ່ໃນ ເມືອງ ເຢຣູຊາເລັມ ແຕ່ວ່າຄົນ ອິສຣາເອນ
ບັນດາປະໂລຫິດ ຄົນ ເລວີ ຄົນໃຊ້ປະຈຳພຣະວິຫານ ແລະລູກຫລານຂ້າລາຊະການຂອງ ໂຊ-
ໂລໂມນ ໃນຫົວເມືອງຂອງປະເທດ ຢູດາ ຕ່າງຄົນຕ່າງອາໄສຢູ່ໃນທີ່ດິນຂອງຕົນໃນຫົວເມືອງຂອງ
ຕົນ

4ບາງຄົນໃນລູກຫລານຂອງ ຢູດາ ແລະລູກຫລານຂອງ ເບັນຢາມິນ ອາໄສຢູ່ໃນ ເມືອງ ເຢຣູ-
ຊາເລັມ ລູກຫລານຂອງ ຢູດາ ມີ ອາທາຢາ ລູກຊາຍ ອຸດຊີຢາ ຜູ້ເປັນລູກຊາຍ ເຊຄາຣີຢາ ຜູ້ເປັນ
ລູກຊາຍ ອາມາຣີຢາ ຜູ້ເປັນລູກຊາຍ ເຊຟາຕີຢາ ຜູ້ເປັນລູກຊາຍ ມາຮາລາເລນ ແຫ່ງຄົນ ເປ-
ເຣັດ ຜູ້ທີ່ເປັນລູກຊາຍຂອງ ຢູດາ

5ແລະ ມາອາເສຢາ ລູກຊາຍ ບາຣຸກ ຜູ້ເປັນລູກຊາຍ ໂກນໂຮເຊ ຜູ້ເປັນລູກຊາຍ ຮາຊາຢາ ຜູ້
ເປັນລູກຊາຍ ອາດາຢາ ຜູ້ເປັນລູກຊາຍ ໂຢຢາຣິບ ຜູ້ເປັນລູກຊາຍ ເຊຄາຣີຢາ ຜູ້ເປັນລູກຊາຍ ຊີ-
ໂລ 6ລູກຫລານຂອງ ເປເຣັດ ທັງໝົດທີ່ອາໄສຢູ່ໃນ ເມືອງ ເຢຣູຊາເລັມ ມີຄົນເກັ່ງກ້າ ສີ່ຮ້ອຍຫົກ
ສິບແປດຄົນ

7ແລະຕໍ່ໄປນີ້ເປັນລູກຫລານຂອງຄົນ ເບັນຢາມິນ ແມ່ນ ສັນລູ ລູກຊາຍ ເມຊຸນລຳ ຜູ້ເປັນລູກ
ຊາຍ ໂຢເອັດ ຜູ້ເປັນລູກຊາຍ ເປດາຢາ ຜູ້ເປັນລູກຊາຍ ໂກລາຢາ ຜູ້ເປັນລູກຊາຍ ມາອາເສຢາ
ຜູ້ເປັນລູກຊາຍ ອີທິເອນ ຜູ້ເປັນລູກຊາຍ ເຢຊາຢາ

8ແລະຖັດພວກເຂົາໄປແມ່ນ ກັບບາຍ ສັນລູ ມີເກົ້າຮ້ອຍຊາວແປດຄົນ 9ໂຢເອນ ລູກຊາຍ ຊີ-
ກຣີ ເປັນຜູ້ເບິ່ງແຍງພວກເຂົາທັງຫຼາຍ ແລະ ຢູດາ ລູກຊາຍ ຮັດເສນູອາ ເປັນຮອງເຈົ້າເມືອງ

10ຈາກບັນດາປະໂລຫິດແມ່ນ ເຢດາຢາ ລູກຊາຍ ໂຢຢາຣິບ ຢາກິນ

11ເສຣາຢາ ລູກຊາຍ ຮິນກີຢາ ຜູ້ເປັນລູກຊາຍ ເມຊຸນລຳ ຜູ້ເປັນລູກຊາຍ ຊາໂດກ ຜູ້ເປັນລູກ
ຊາຍ ເມຣາໂຢດ ຜູ້ເປັນລູກຊາຍ ອາຮີຕຸບ ຜູ້ປົກຄອງພຣະວິຫານຂອງ ພຣະເຈົ້າ 12ພີ່ນ້ອງຂອງ
ພວກເຂົາທີ່ເຮັດວຽກຢູ່ໃນພຣະວິຫານ ມີແປດຮ້ອຍຊາວສອງຄົນ ແລະ ອາດາຢາ ລູກຊາຍ ເຢໂຮ-

ຣາມ ຜູ້ເປັນລູກຊາຍ ເປລາລີຢາ ຜູ້ເປັນລູກຊາຍ ອາມຊີ ຜູ້ເປັນລູກຊາຍ ເຊຄາຣີຢາ ຜູ້ເປັນລູກ
ຊາຍ ປັດຊູ ຜູ້ເປັນລູກຊາຍ ມັນກີຢາ [13]ພີ່ນ້ອງຂອງພວກເຈົ້ານາຍຂອງບັນພະບູລຸດ ມີສອງຮ້ອຍ
ສີ່ສິບສອງຄົນ ແລະ ອາມາດສາຍ ລູກຊາຍ ອັດຊາເຣນ ຜູ້ເປັນລູກຊາຍ ອາຣະຊາຍ ຜູ້ເປັນລູກ
ຊາຍ ເມຊິນເລໂມດ ຜູ້ເປັນລູກຊາຍ ອິມເມ [14]ແລະພີ່ນ້ອງຂອງພວກເຂົາເປັນທະຫານເກັ່ງກ້າ ມີ
ໜຶ່ງຮ້ອຍຊາວແປດຄົນ ຜູ້ເບິ່ງແຍງຂອງພວກເຂົາແມ່ນ ຊັບດີເອນ ລູກຊາຍຂອງຄົນໃຫຍ່ຄົນໜຶ່ງ

[15]ຈາກຄົນ ເລວີ ແມ່ນ ເຊມາຢາ ລູກຊາຍ ຮັດຊຸບ ຜູ້ເປັນລູກຊາຍ ອັດຊະຣີກາມ ຜູ້ເປັນລູກ
ຊາຍ ຮາຊາບີຢາ ຜູ້ເປັນລູກຊາຍ ບຸນນີ

[16]ແລະ ຊັບເບທາຍ ກັບ ໂຢຊາບັດ ຈາກພວກຫົວໜ້າຂອງພວກ ເລວີ ຜູ້ຄວບຄຸມການງານ
ພາຍນອກພຣະວິຫານຂອງ ພຣະເຈົ້າ [17]ແລະ ມັດຕານີຢາ ລູກຊາຍ ມີກາ ຜູ້ເປັນລູກຊາຍ ຊັບດີ
ຜູ້ເປັນລູກຊາຍ ອາສັບ ຜູ້ເປັນຫົວໜ້າໃນການ ເລີ່ມຕົ້ນການ ໂມທະນາພຣະຄຸນ ການອະທິຖານ
ແລະ ບັກບຸກີຢາ ເປັນທີສອງໃນໝູ່ພີ່ນ້ອງຂອງພວກເຂົາ ແລະ ອັບດາ ລູກຊາຍ ຊາມມູອາ ຜູ້ເປັນ
ລູກຊາຍ ກາລັນ ຜູ້ເປັນລູກຊາຍ ເຢດູທູນ [18]ຄົນ ເລວີ ທັງໝົດໃນນະຄອນບໍລິສຸດມີ ສອງຮ້ອຍ
ແປດສິບສີ່ຄົນ

[19]ຄົນເຝົ້າປະຕູມີ ອັກກຸບ ຕັນໂມນ ແລະພີ່ນ້ອງທັງໝົດຂອງພວກເຂົາ ຜູ້ເຝົ້າບັນດາປະຕູມີ
ໜຶ່ງຮ້ອຍເຈັດສິບສອງຄົນ

## ພວກປະໂລຫິດ ແລະຄົນເລວີສາລະພາບບາບຂອງຕົນ

[20]ຄົນ ອິສຣາເອນ ນອກນັ້ນ ທີ່ເປັນພວກປະໂລຫິດແລະຄົນ ເລວີ ຢູ່ໃນຫົວເມືອງທັງໝົດຂອງ
ຢູດາ ທຸກຄົນຢູ່ໃນທີ່ດິນມໍລະດົກຂອງພວກເຂົາ

[21]ແຕ່ຄົນໃຊ້ປະຈຳພຣະວິຫານຢູ່ທີ່ ໂອເຟນ ແລະ ຊີຮາ ກັບ ກິດຊະປາ ຄວບຄຸມຄົນໃຊ້ປະຈຳ
ພຣະວິຫານ

[22]ຜູ້ເບິ່ງແຍງຄົນ ເລວີ ໃນ ເມືອງ ເຢຣູຊາເລັມ ແມ່ນ ອຸດຊີ ລູກຊາຍ ບານີ ຜູ້ເປັນລູກຊາຍ ຮາ-
ຊາບີຢາ ຜູ້ເປັນລູກຊາຍ ມັດຕານີຢາ ຜູ້ເປັນລູກຊາຍ ມີກາ ສຳລັບລູກຫລານຂອງ ອາສັບ
ພວກນັກຮ້ອງເບິ່ງແຍງການງານພຣະວິຫານ ຂອງ ພຣະເຈົ້າ [23]ເພາະວ່າມີພະບັນຊາຈາກກະສັດ
ເຖິງເລື່ອງພວກເຂົາແລະມີຄ່າຈ້າງທີ່ໄດ້ຕົກລົງກັນໄວ້ສຳລັບນັກຮ້ອງ ຕາມທີ່ຕ້ອງການທຸກໆມື້

[24]ແລະ ເປທາຮີຢາ ລູກຊາຍ ເມເຊດຊະເບນ ຄົນ ເຊຣາ ລູກຊາຍຢູດາ ເປັນຜູ້ເຝົ້າຢູ່ກັບກະສັດ
ໃນເລື່ອງກິດຈະການຕ່າງໆອັນກ່ຽວກັບປະຊາຊົນ

[25]ສ່ວນທີ່ຢູ່ບ້ານ ແລະ ໄຮ່ນາຂອງຊົນນະບົດເຫຼົ່ານັ້ນ ປະຊາຊົນພວກຢູດາບາງຄົນອາໄສຢູ່
ໃນ ກີຣິອາດ-ອາຣະບາ ແລະຊົນນະບົດຂອງເມືອງນັ້ນ ໃນດີໂບນກັບຊົນນະບົດຂອງເມືອງນັ້ນ
ແລະໃນ ເຢກັບເຊເອນກັບຊົນນະບົດຂອງເມືອງນັ້ນ [26]ແລະໃນເມືອງຕ່າງໆ ເຢຊູອາກັບໃນ ໂມ-
ລາດາ ແລະ ເບັດ-ເປເລັດ [27]ໃນຮາຊາ-ຊູອານ ໃນ ເບເອ-ເຊບາກັບຊົນນະບົດຂອງເມືອງນັ້ນ
[28]ໃນຊິກລັກ ໃນ ເມໂກນາກັບຊົນນະບົດຂອງເມືອງນັ້ນ [29]ໃນ ເອັນ-ຣິມໂມນ ໃນ ໂຊຣາ ໃນ
ຢາຣະມູດ [30]ຊາໂນອາ ອະດຸລາມ ແລະຊົນນະບົດຂອງເມືອງນັ້ນ ລາກິດ ແລະໄຮ່ນາຂອງ
ເມືອງນັ້ນ ອາເຊກາ ກັບຊົນນະບົດຂອງເມືອງນັ້ນ ພວກເຂົາຈຶ່ງຕັ້ງຄ້າຍຈາກ ເບເອ-ເຊບາ ເຖິງ

ຮ່ອມພູຮິນໂນມ
[31]ປະຊາຊົນເບັນຢາມິນຢູ່ຕໍ່ຈາກເກບາໄປ ທີ່ມິກມາດ ອາຢາ ເບັດເອນ ແລະຊົນນະບົດ
ຂອງເມືອງນັ້ນ [32]ທີ່ອານາໂທດ ໂນບ ອານານີຢາ [33]ຮາໂຊ ຣາມາ ກິດຕາຢິມ [34]ຮາດິດ
ເຊໂບຢິມ ເນບັນລາດ [35]ໂລດ ແລະໂອໂນ ຮ່ອມພູເຂົາຂອງພວກຊ່າງຝີມື [36]ແລະບາງສ່ວນ
ຂອງຄົນເລວີຢູ່ໃນເຂດແດນຢູດາ ແລະໃນເຜົ່າເບັນຢາມິນ

# ບົດທີ 12

## ລາຍຊື່ຂອງຄົນທີ່ປະທັບກາໄວ້ທີ່ພັນທະສັນຍາ

[1]ຕໍ່ໄປນີ້ເປັນປະໂລຫິດ ແລະຄົນເລວີທີ່ຂຶ້ນມາກັບເຊຣູບາເບນ ລູກຊາຍເຊອານຕີເອນ
ແລະກັບເຢຊູອາແມ່ນ ເສຣາຢາ ເຢເຣມີຢາ ເອັດຊະຣາ [2]ອາມາຣີຢາ ມັນລຸກ ຮັດຕຸຊະ
[3]ເຊການີອາ ເຣຮູມ ເມເຣໂມດ [4]ອິດໂດ ກິນເນທອຍ ອາບີຢາ [5]ມີຢາມິນ ມາອາດີຢາ ບິນ-
ກາ [6]ເຊມາຢາ ໂຢຢາຣິບ ເຢດາຢາ [7]ສັນລູ ອາໂມກ ຮິນກີຢາ ເຢດາຢາ ຄົນເຫຼົ່ານີ້ເປັນຫົວ-
ໜ້າຂອງປະໂລຫິດ ແລະພີ່ນ້ອງຂອງພວກເຂົາໃນສະໄໝຂອງເຢຊູອາ
[8]ຄົນເລວີແມ່ນ ເຢຊູອາ ບິນນຸຍ ກັດມີເອນ ເຊເຣບີຢາ ຢູດາ ແລະມັດຕານີຢາຜູ້ຊຶ່ງເບິ່ງ-
ແຍງການຮ້ອງເພງ ສັນລະເສີນພ້ອມກັບພີ່ນ້ອງຂອງພວກເຂົາ [9]ແລະບັກບຸກີຢາກັບອຸນນີພີ່-
ນ້ອງຂອງເພິ່ນຢືນຢູ່ກົງກັນຂ້າມໃນການບົວລະບັດ

## ລາຍຊື່ຂອງຄົນທີ່ອາໄສຢູ່ໃນເມືອງເຢຣູຊາເລັມ

[10]ເຢຊູອາໃຫ້ກຳເນີດລູກຊື່ໂຢຢາກີມ ໂຢຢາກີມໃຫ້ກຳເນີດລູກຊື່ເອລີຢາຊິບ ເອລີຢາຊິບໃຫ້
ກຳເນີດລູກຊື່ໂຢຢາດາ [11]ໂຢຢາດາໃຫ້ກຳເນີດລູກຊື່ໂຢນາທານ ແລະໂຢນາທານໃຫ້ກຳເນີດ
ລູກຊື່ຢັດດູອາ
[12]ໃນລາຊະການໂຢຢາກີມ ມີປະໂລຫິດຜູ້ເປັນປະມຸກຂອງບັນພະບູລຸດຄື ຂອງຄົນເສຣາຢາ
ມີ ເມຣາຢາ ຂອງຄົນເຢເຣມີຢາ ຮານານີຢາ [13]ຂອງຄົນເອັດຊະຣາມີ ເມຊຸນລຳ ຂອງຄົນ
ອາມາຣີຢາມີ ເຢໂຮຮານັນ [14]ຂອງຄົນມັນລຸກີມີ ໂຢນາທານ ຂອງຄົນເຊບານີຢາມີ ໂຢເຊັບ
[15]ຂອງຄົນຮາຣິມມີ ອັດນາ ຂອງຄົນເມຣາໂຢດມີ ເຮນກາຍ [16]ຂອງຄົນອິດໂດມີເຊຄາຣີຢາ
ຂອງຄົນກິນເນໂທນມີ ເມຊຸນລຳ [17]ຂອງຄົນອາບີຢາມີ ຊິກຣີ ຂອງຄົນມິນຢາມິນ ຂອງຄົນ
ໂມອາດີຢາມີ ປີນຕາຍ [18]ຂອງຄົນບິນກາມີ ຊາມມູອາ ຂອງຄົນເຊມາຢາມີ ເຢໂຮນາທານ
[19]ແລະຂອງຄົນໂຢຢາຣິບມີ ມັດເຕນາຍ ຂອງຄົນເຢດາຢາມີ ອຸດຊີ [20]ຂອງຄົນສັນລູມີ ການ-
ລາຍ ຂອງຄົນອາໂມກມີ ເຮເບ [21]ຂອງຄົນຮິນກີຢາມີ ຮາຊາບີຢາ ຂອງຄົນເຢດາຢາມີ ເນ-
ທາເນນ

## ຄົນອິສຣາເອນນອກນັ້ນອາໄສຢູ່ໃນຫົວເມືອງຕ່າງໆ

[22]ສ່ວນພວກເລວີໃນສະໄໝຂອງເອລີຢາຊິບ ໂຢຢາດາ ໂຢຮານານ ແລະຢັດດູອາ ຊື່ເຈົ້າ
ນາຍຂອງບັນພະບູລຸດມີບັນທຶກໄວ້ ທັງບັນດາປະໂລຫິດຈົນເຖິງລາຊະການຂອງດາຣິອຸດ ຄົນ
ເປີເຊຍ [23]ລູກຫລານຂອງເລວີເຈົ້ານາຍຂອງບັນພະບູລຸດ ມີບັນທຶກໄວ້ໃນໜັງສືພົງສາວະດານ

ຈົນສະໄໝຂອງ ໂຢຮານານ ລູກຊາຍ ເອລີຢາຊິບ [24]ຫົວໜ້າຂອງຄົນ ເລວີ ແມ່ນ ຮາຊາບີຢາ ເຊ-
ເຣບີຢາ ແລະ ເຢຊູອາ ລູກຊາຍ ກັດມີເອນ ກັບຍາດພີ່ນ້ອງຂອງພວກເຂົາຢູ່ກົງກັນຂ້າມ ທີ່ຈະ
ສັນລະເສີນ ແລະໂມທະນາພຣະຄຸນ ຕາມບັນຍັດຂອງ ດາວິດ ຄົນຂອງ ພຣະເຈົ້າ ເປັນຍາມໆໄປ
[25]ມັດຕານີຢາ ບັກບຸກີຢາ ໂອບາດີຢາ ເມຊຸນລຳ ຕັນໂມນ ແລະ ອັກກຸບ ເປັນຄົນເຝົ້າ
ປະຕູ ຢືນເຝົ້າຢູ່ທີ່ປະຕູສາງມ້ຽນເຄື່ອງ [26]ຄົນເຫຼົ່ານີ້ຢູ່ໃນສະໄໝຂອງ ໂຢຢາກິມ ລູກຊາຍ ເຢຊູອາ
ຜູ້ເປັນ ລູກຊາຍ ເຢໂຮຊາດັກ ແລະ ໃນ ສະໄໝ ຂອງ ເນເຮມີຢາ ຜູ້ປົກຄອງ ກັບ ໃນ ສະໄໝ ຂອງ
ເອັດຊະຣາປະໂລຫິດ ແລະນັກປາດ

## ພວກປະໂລຫິດ ແລະຄົນເລວີທີ່ຂຶ້ນມາກັບເຊຣູບາເບນ

[27]ໃນ ເມື່ອ ເຮັດພິທີມອບຖວາຍກຳແພງ ເມືອງ ເຢຣູຊາເລັມ ພວກເຂົາໄດ້ຊອກຄົນ ເລວີ ທຸກທີ່
ທຸກບ່ອນຂອງ ພວກເຂົາ ເພື່ອຈະນຳມາທີ່ເມືອງ ເຢຣູຊາເລັມ ເພື່ອສະຫລອງ ມອບຖວາຍດ້ວຍ
ຄວາມຍິນດີ ດ້ວຍການໂມທະນາພຣະຄຸນ ແລະດ້ວຍການຮ້ອງເພງ ດ້ວຍແຊ່ງ ພິນໃຫຍ່ ແລະ
ພິນຄູ່ [28]ລູກຫລານພວກນັກຮ້ອງໄດ້ລວມກັນມາຈາກແຂວງອ້ອມເມືອງ ເຢຣູຊາເລັມ ແລະຈາກ
ຊົນນະບົດຂອງຊາວ ເນໂຕຟາ [29]ທັງມາຈາກ ເບັດ-ກິນການ ແລະຈາກເຂດ ເກບາ ແລະ ອາ-
ຊະມາເວດ ເພາະບັນດານັກຮ້ອງ ໄດ້ສ້າງຊົນນະບົດຂອງຕົນອ້ອມຮອບ ເມືອງ ເຢຣູຊາເລັມ
[30]ພວກປະໂລຫິດ ແລະພວກ ເລວີ ໄດ້ຊຳລະລ້າງຕົນໃຫ້ບໍລິສຸດ ແລະໄດ້ຊຳລະລ້າງປະຊາຊົນ
ກັບປະຕູເມືອງ ແລະກຳແພງໃຫ້ບໍລິສຸດ
[31]ແລ້ວຂ້າພະເຈົ້າໄດ້ສັ່ງພວກເຈົ້ານາຍ ແຫ່ງ ຢູດາ ຂຶ້ນເທິງກຳແພງ ແລະແຕ່ງຕັ້ງ ໃຫ້ຄະນະ
ໃຫຍ່ ສອງຄະນະເປັນຜູ້ກ່າວໂມທະນາພຣະຄຸນ ແລະຍ່າງເປັນຂະບວນແຫ່ ຄະນະໜຶ່ງໄປທາງ
ຂວາ ຂຶ້ນໄປເທິງ ກຳແພງຈົນເຖິງປະຕູກອງຂີ້ເຫຍື້ອ [32]ແລະຖັດພວກເຂົາໄປມີ ໂຮຊາຢາ
ແລະເຈົ້ານາຍແຫ່ງ ຢູດາ ເຄິ່ງໜຶ່ງ [33]ກັບ ອາຊາຣີຢາ ເອັດຊະຣາ ເມຊຸນລຳ [34]ຢູດາ ເບັນຢາ-
ມິນ ເຊມາຢາ ແລະ ເຢເຣມີຢາ [35]ແລະລູກຊາຍຂອງພວກປະໂລຫິດບາງຄົນທີ່ມີແກຄື ເຊຄາ-
ຣີຢາ ລູກຊາຍ ໂຢນາທານ ຜູ້ເປັນລູກຊາຍ ເຊມາຢາ ຜູ້ເປັນລູກຊາຍ ມັດຕານີຢາ ຜູ້ເປັນລູກຊາຍ
ມີກາຢາ ຜູ້ເປັນລູກຊາຍ ຊາກູເຣ ຜູ້ເປັນລູກຊາຍ ອາສັບ [36]ກັບຍາດພີ່ນ້ອງຂອງພວກເຂົາຄື
ເຊມາຢາ ອັດຊາເຣນ ມີລາລາຍ ກີລາລາຍ ມາອາຍ ເນທາເນນ ແລະ ຢູດາ ຮານານີ
ພ້ອມກັບ ເຄື່ອງດົນຕີຂອງ ດາວິດ ຄົນ ຂອງ ພຣະເຈົ້າ ແລະ ເອັດຊະຣາ ຜູ້ຮອບຮູ້ໃນພຣະທຳ
ພຣະເຈົ້າ ໄດ້ຍ່າງນຳໜ້າພວກເຂົາ [37]ທີ່ປະຕູນ້ຳພຸ ຊຶ່ງຢູ່ກົງກັນຂ້າມກັບພວກເຂົາ ພວກເຂົາ
ຍ່າງຂຶ້ນບັນໄດຂອງນະຄອນ ດາວິດ ທາງຂຶ້ນກຳແພງ ເໜືອພະລາຊະວັງຂອງ ດາວິດ ເຖິງປະຕູ
ນ້ຳທາງທິດຕາເວັນອອກ
[38]ອີກຄະນະໜຶ່ງທີ່ກ່າວຄຳໂມທະນາພຣະຄຸນຍ່າງໄປທາງກົງກັນຂ້າມ ແລະຂ້າພະເຈົ້າຕາມ
ພວກເຂົາໄປ ພ້ອມກັບປະຊາຊົນເຄິ່ງໜຶ່ງ ເທິງກຳແພງເໜືອຫໍຄອຍເຕົາໄຟ ເຖິງກຳແພງກວ້າງ
[39]ແລະເທິງປະຕູ ເອຟຣາຢິມ ທາງປະຕູເກົ່າ ທາງປະຕູປາ ແລະຫໍຄອຍ ຮານາເນນ ຫໍຄອຍ
ຮ້ອຍຄົນ ເຖິງປະຕູແກະ ແລະພວກເຂົາມາຢຸດຢູ່ທີ່ປະຕູຍາມ
[40]ຄະນະທັງສອງ ຜູ້ກ່າວຄຳໂມທະນາໄດ້ມາຢືນຢູ່ທີ່ພຣະວິຫານຂອງ ພຣະເຈົ້າ ທັງຂ້າພະ-

ເຈົ້າ ແລະເຈົ້າໜ້າທີ່ເຄິ່ງໜຶ່ງຢູ່ກັບຂ້າພະເຈົ້າ 41ກັບປະໂລຫິດທີ່ຖືແກແມ່ນ ເອລີຢາກິມ ມາອາ-
ເສຢາ ມິນຢາມິນ ມີກາຢາ ເອລີໂອນາຍ ເຊຄາຣີຢາ ກັບຮານານີຢາ 42ແລະມາອາເສຢາ
ເຊມາຢາ ເອເລອາຊາ ອຸດຊີ ເຢໂຮຮານັນ ມັນກີຢາ ເອລາມ ແລະເອເຊ ແລະບັນດານັກ
ຮ້ອງໄດ້ຮ້ອງເພງດ້ວຍສຽງດັງ ເຢັດຊະຣາຢາເປັນຫົວໜ້າຂອງພວກເຂົາ 43ແລະໄດ້ຖວາຍເຄື່ອງ
ສັດບູຊາຢ່າງໃຫຍ່ໃນມື້ນັ້ນ ຊື່ນຊົມຍິນດີ ເພາະພຣະເຈົ້າຊົງກະທຳໃຫ້ພວກເຂົາຊື່ນຊົມຍິນດີ
ດ້ວຍຄວາມຊື່ນບານອັນໃຫຍ່ຫຼວງ ພວກພັນລະຍາ ແລະເດັກນ້ອຍກໍຊື່ນຊົມຍິນດີດ້ວຍກັນແລະ
ຄວາມຊື່ນບານຂອງເມືອງເຢຣູຊາເລັມກໍມີສຽງທີ່ໄດ້ຍິນອອກໄປໄກ
44ໃນມື້ນັ້ນ ພວກເຂົາໄດ້ແຕ່ງຕັ້ງບາງຄົນໃຫ້ເບິ່ງແຍງຫ້ອງສຳລັບສິ່ງຂອງບໍລິຈາກ ໝາກໄມ້
ລຸ້ນທຳອິດ ໜຶ່ງສ່ວນສິບໃຫ້ຮວບຮວມປັນສ່ວນຊຶ່ງກຳນົດໄວ້ໃນພຣະບັນຍັດ ສຳລັບປະໂລຫິດ
ແລະພວກເລວີ ເຂົ້າມາໄວ້ໃນນັ້ນ ຕາມໄຮ່ນາໃນຫົວເມືອງເຫຼົ່ານັ້ນ ເພາະຢູດາຊື່ນຊົມຍິນດີ
ດ້ວຍເລື່ອງບັນດາປະໂລຫິດ ແລະພວກເລວີຜູ້ບົວລະບັດຢູ່ນັ້ນ 45ແລະທັງພວກນັກຮ້ອງ ພວກ
ເຝົ້າປະຕູໄດ້ບົວລະບັດ ພຣະເຈົ້າຂອງພວກເຂົາ ແລະເຮັດການຊຳລະລ້າງຕົວໃຫ້ບໍລິສຸດ ຕາມ
ພຣະບັນຊາຂອງດາວິດ ແລະຂອງໂຊໂລໂມນລູກຊາຍຂອງດາວິດ 46ເພາະໃນສະໄໝດາວິດ
ແລະອາສັບນັ້ນມີຫົວໜ້າພວກນັກຮ້ອງ ແລະມີບົດເພງສັນລະເສີນ ແລະບົດເພງໂມທະນາ
ພຣະຄຸນພຣະເຈົ້າ 47ອິສຣາເອນທັງປວງໃນສະໄໝຂອງເຊຣູບາເບນແລະໃນສະໄໝຂອງເນ-
ເຮມີຢາ ໄດ້ແບ່ງປັນສ່ວນຕາມຕ້ອງການທຸກມື້ແກ່ນັກຮ້ອງ ແລະຄົນເຝົ້າປະຕູ ພວກເຂົາໄດ້
ແບ່ງສ່ວນຂອງພວກເລວີໄວ້ຕ່າງຫາກ ແລະພວກເລວີໄດ້ແບ່ງສ່ວນຂອງລູກຫລານອາໂຣນໄວ້
ຕ່າງຫາກ

# ບົດທີ 13

## ສຳມະໂນຄົວເຊື້ອສາຍຂອງພວກປະໂລຫິດ

1ໃນມື້ນັ້ນ ພວກເຂົາໄດ້ອ່ານໜັງສືຂອງໂມເຊໃຫ້ປະຊາຊົນຟັງ ແລະພວກເຂົາໄດ້ພົບສິ່ງທີ່
ຂຽນໄວ້ວ່າ ຢ່າໃຫ້ຄົນອຳໂມນ ຄົນໂມອາບເຂົ້າໄປໃນບ່ອນຊຸມນຸມຂອງພຣະເຈົ້າຈັກເທື່ອ
2ເພາະວ່າພວກເຂົາບໍ່ໄດ້ເອົາເຂົ້າຈີ່ ແລະນ້ຳມາຕ້ອນຮັບລູກຫລານອິສຣາເອນ ແຕ່ໄດ້ຈ້າງບາ-
ລາອາມໃຫ້ມາຕໍ່ສູ້ແລະສາບແຊ່ງພວກເຂົາ ແຕ່ພຣະເຈົ້າຂອງເຮົາໄດ້ປ່ຽນຄຳສາບແຊ່ງເປັນຄຳ
ພອນ 3ແລະຢູ່ມາ ເມື່ອປະຊາຊົນໄດ້ຍິນພຣະບັນຍັດນັ້ນ ພວກເຂົາກໍແຍກພວກອິສຣາເອນ
ອອກຈາກຄົນຕ່າງດ້າວທັງປວງ
4ກ່ອນໜ້ານີ້ ເອລີຢາຊິບປະໂລຫິດຜູ້ໄດ້ຮັບການແຕ່ງຕັ້ງໃຫ້ເບິ່ງແຍງຫ້ອງໃນພຣະວິຫານ
ຂອງພຣະເຈົ້າຂອງເຮົາ ແລະຜູ້ກ່ຽວພັນກັບໂຕບີຢາ 5ໄດ້ຈັດຫ້ອງໃຫຍ່ຫ້ອງໜຶ່ງໃຫ້ໂຕບີຢາ
ເປັນຫ້ອງທີ່ແຕ່ກ່ອນໃຊ້ເກັບມ້ຽນເຄື່ອງບູຊາພືດຜົນເປັນເມັດ ກຳຍານ ເຄື່ອງໃຊ້ຕ່າງໆ ແລະ
ໜຶ່ງສ່ວນສິບທີ່ເປັນເຂົ້າ ນ້ຳອະງຸ່ນໃໝ່ ແລະນ້ຳມັນ ຊຶ່ງພວກເຂົາໃຫ້ໄວ້ຕາມບັນຍັດ ໃຫ້ແກ່
ພວກເລວີ ນັກຮ້ອງ ຄົນເຝົ້າປະຕູ ແລະຂອງບໍລິຈາກສຳລັບປະໂລຫິດ
6ເມື່ອເກີດເລື່ອງນີ້ ຂ້າພະເຈົ້າບໍ່ໄດ້ຢູ່ໃນເມືອງເຢຣູຊາເລັມ ເພາະວ່າໃນປີທີສາມສິບສອງ

ແຫ່ງລາຊະການ ອາຕາເຊເຊັດ ກະສັດແຫ່ງ ບາບີໂລນ ນັ້ນ ຂ້າພະເຈົ້າໄດ້ໄປເຝົ້າກະສັດ ແລະ
ອີກບໍ່ພໍເທົ່າໃດມື້ ຂ້າພະເຈົ້າກໍທູນລາກະສັດ

## ພວກຫົວໜ້າຂອງຄົນເລວີ

[7]ເມື່ອມາຮອດ ເມືອງ ເຢຣູຊາເລັມ ແລ້ວຂ້າພະເຈົ້າຈຶ່ງຮູ້ຄວາມຊົ່ວຮ້າຍ ຊຶ່ງ ເອລີຢາຊິບ ໄດ້
ກະທຳເພື່ອ ໂຕບີຢາ ຄືຈັດຫ້ອງພາຍໃນບໍລິເວນພຣະວິຫານຂອງ ພຣະເຈົ້າ ໃຫ້ລາວ [8]ຂ້າພະເຈົ້າ
ຮ້າຍ ຫລາຍ ແລະ ຂ້າພະເຈົ້າກໍ ໂຍນ ເຄື່ອງ ແຕ່ງ ເຮືອນ ທັງ ໝົດ ຂອງ ໂຕບີຢາ ອອກ ຈາກ ຫ້ອງ
[9]ແລ້ວຂ້າພະເຈົ້າສັ່ງໃຫ້ລາວຊຳລະຫ້ອງ ແລະຂ້າພະເຈົ້າກໍນຳເຄື່ອງໃຊ້ປະຈຳພຣະວິຫານຂອງ
ພຣະເຈົ້າ ທັງເຄື່ອງບູຊາພືດຜົນເປັນເມັດ ກັບກຳຍານກັບມາໄວ້ບ່ອນນັ້ນອີກ

## ການເຮັດພິທີມອບຖວາຍກຳແພງເມືອງ

[10]ຂ້າພະເຈົ້າຍັງຮູ້ອີກວ່າສ່ວນຂອງພວກ ເລວີ ນັ້ນ ພວກເຂົາບໍ່ໄດ້ມອບໃຫ້ ເພາະສະນັ້ນ
ພວກ ເລວີ ແລະນັກຮ້ອງຜູ້ປະຕິບັດການງານ ຕ່າງກໍໜີກັບໄປໄຮ່ນາຂອງຕົນ [11]ຂ້າພະເຈົ້າຈຶ່ງຕໍ່
ວ່າເຈົ້າໜ້າທີ່ ແລະເວົ້າວ່າ “ເປັນຫຍັງຈຶ່ງປະຖິ້ມພຣະວິຫານຂອງ ພຣະເຈົ້າ” ຂ້າພະເຈົ້າຈຶ່ງ
ທ້ອນໂຮມພວກເຂົາກັບມາ ແລະແຕ່ງຕັ້ງພວກເຂົາໄວ້ຕາມຕຳແໜ່ງຂອງພວກເຂົາອີກ

[12]ແລະ ຢູດາ ທັງປວງໄດ້ນຳໜຶ່ງສ່ວນສິບທີ່ເປັນເຂົ້າ ນ້ຳອະງຸ່ນໃໝ່ ແລະນ້ຳມັນເຂົ້າມາຄັງ
ພຣະວິຫານ [13]ຂ້າພະເຈົ້າໄດ້ແຕ່ງຕັ້ງຄົນໃຫ້ເບິ່ງແຍງຄັງພຣະວິຫານແມ່ນ ເຊເລມີຢາ ປະໂລ-
ຫິດ ຊາໂດກ ນັກຮຽນຮູ້ຝ່າຍພຣະບັນຍັດ ແລະ ເປດາຢາ ແຫ່ງພວກ ເລວີ ແລະຜູ້ຊ່ວຍພວກເຂົາ
ຄື ຮານານ ລູກຊາຍຊາກູເຣ ຜູ້ເປັນລູກຊາຍ ມັດຕານີຢາ ເພາະນັບໄດ້ວ່າພວກເຂົາເປັນຄົນ
ສັດຊື່ ແລະໜ້າທີ່ຂອງພວກເຂົາ ຄືແຈກຈ່າຍໃຫ້ແກ່ພວກພີ່ນ້ອງ

[14]“ຂ້າແດ່ ພຣະເຈົ້າ ຂອງຂ້າພະອົງ ກ່ຽວກັບເລື່ອງນີ້ຂໍຊົງລະນຶກເຖິງຂ້າພະອົງ ແລະຂໍຢ່າລຶບ
ລ້າງການດີທັງຫຼາຍຂອງຂ້າພະອົງທີ່ຂ້າພະອົງໄດ້ກະທຳເພື່ອພຣະວິຫານຂອງ ພຣະເຈົ້າ ແລະ
ເພື່ອການບົວລະບັດໃນບ່ອນນັ້ນ”

## ຄົນອິສຣາເອນຕ້ອງແຍກຈາກຄົນຕ່າງດ້າວ

[15]ເທື່ອນັ້ນໃນ ຢູດາ ຂ້າພະເຈົ້າເຫັນຄົນຢຽບນ້ຳອະງຸ່ນໃນວັນສະບາໂຕ ແລະນຳຟ່ອນເຂົ້າ
ບັນທຸກເທິງຫລັງລາ ທັງນ້ຳອະງຸ່ນ ຜົນອະງຸ່ນ ໝາກເດື່ອ ແລະສິ່ງຂອງທຸກຢ່າງ ຊຶ່ງພວກເຂົາ
ເອົາມາເມືອງ ເຢຣູຊາເລັມ ໃນວັນສະບາໂຕ ຂ້າພະເຈົ້າໄດ້ຕັກເຕືອນພວກເຂົາໃນມື້ທີ່ພວກເຂົາ
ຂາຍອາຫານ [16]ແລະມີພວກ ຕີເຣ ອາໄສຢູ່ໃນເມືອງໄດ້ເອົາປາ ແລະສິນຄ້າທຸກຢ່າງເຂົ້າມາຂາຍ
ໃນວັນສະບາໂຕແກ່ປະຊາຊົນ ຢູດາ ແລະໃນເມືອງ ເຢຣູຊາເລັມ [17]ແລ້ວຂ້າພະເຈົ້າໄດ້ຕໍ່ວ່າພວກ
ເຈົ້ານາຍ ແຫ່ງ ຢູດາ ແລະເວົ້າກັບພວກເຂົາວ່າ “ເປັນຫຍັງທ່ານທັງຫຼາຍ ຈຶ່ງກະທຳຄວາມຊົ່ວ
ຮ້າຍເຊັ່ນນີ້ ຄືເຮັດໃຫ້ວັນສະບາໂຕເປັນມົນທິນ [18]ບັນພະບູລຸດຂອງທ່ານບໍ່ໄດ້ກະທຳເຊັ່ນນີ້ບໍ
ແລະ ພຣະເຈົ້າ ຂອງ ເຮົາບໍ່ ໄດ້ຊົງ ເອົາ ເຫດຮ້າຍທັງຫລາຍ ໃຫ້ຕົກຢູ່ ເທິງ ເຮົາ ແລະ ເທິງ ເມືອງນີ້
ທ່ານຍັງຈະນຳພຣະພິໂລດຫຼາຍກວ່ານັ້ນມາໃຫ້ອິສຣາເອນ ດ້ວຍການກະທຳໃຫ້ວັນສະບາໂຕເປັນ
ມົນທິນ”

[19]ແລະຢູ່ມາ ເມື່ອເລີ່ມຈະຄ່ຳທີ່ປະຕູເມືອງ ເຢຣູຊາເລັມກ່ອນວັນສະບາໂຕ ຂ້າພະເຈົ້າໄດ້ບັນ-

ຊາໃຫ້ປິດປະຕູເມືອງ ແລະສັ່ງວ່າ ບໍ່ໃຫ້ເປີດຈົນກວ່າວັນສະບາໂຕຜ່ານໄປ ແລະຂ້າພະເຈົ້າກໍ
ຕັ້ງຂ້າລາຊະການບາງຄົນຂອງຂ້າພະເຈົ້າໃຫ້ເບິ່ງແຍງປະຕູເມືອງ ບໍ່ໃຫ້ນຳເອົາສິ່ງຂອງໃດເຂົ້າ
ມາໃນວັນສະບາໂຕ [20]ແລ້ວພວກພໍ່ຄ້າ ແລະພວກຂາຍສິນຄ້າທຸກຊະນິດກໍຢູ່ນອກເມືອງ ເຢຣູຊາ-
ເລັມ ຄືນໜຶ່ງ ສອງຄືນ [21]ຂ້າພະເຈົ້າໄດ້ຕັກເຕືອນພວກເຂົາ ແລະເວົ້າກັບພວກເຂົາວ່າ "ເປັນ
ຫຍັງທ່ານມານອນຢູ່ຂ້າງກຳແພງເມືອງ ຖ້າທ່ານເຮັດອີກຂ້າພະເຈົ້າຈະຈັບທ່ານ" ຕັ້ງແຕ່ນັ້ນມາ
ພວກເຂົາກໍບໍ່ມາອີກໃນວັນສະບາໂຕ

[22]ແລະຂ້າພະເຈົ້າສັ່ງໃຫ້ພວກເລວີຊຳລະຕົວຂອງພວກເຂົາ ແລະມາເຝົ້າປະຕູເມືອງເພື່ອຖື
ຮັກສາວັນສະບາໂຕໃຫ້ບໍລິສຸດ "ຂ້າແດ່ພຣະເຈົ້າຂອງຂ້າພະອົງ ຂໍພຣະອົງຊົງລະນຶກເຖິງຂ້າ-
ພະອົງໃນເລື່ອງນີ້ດ້ວຍ ແລະຂໍຊົງໄວ້ຊີວິດຂ້າພະອົງຕາມຄວາມຍິ່ງໃຫຍ່ແຫ່ງຄວາມເມດຕາ
ຂອງພຣະອົງ"

## ເນເຮມີຢາໄປຍັງເຢຣູຊາເລັມເທື່ອທີ່ສອງ

[23]ໃນສະໄໝນັ້ນຂ້າພະເຈົ້າໄດ້ເຫັນພວກຍິວ (ພວກຢູດາ) ທີ່ໄດ້ແຕ່ງງານກັບແມ່ຍິງຊາວ
ອາຊະໂດດ ອຳໂມນ ແລະໂມອາບ [24]ແລະລູກນ້ອຍຂອງພວກເຂົາເຄິ່ງໜຶ່ງເວົ້າພາສາອາຊະ-
ໂດດ ພວກເຂົາເວົ້າພາສາເຮັບເຣີບໍ່ໄດ້ ແຕ່ເວົ້າພາສາຊົນຊາດຂອງພວກເຂົາແຕ່ລະພວກ
[25]ຂ້າພະເຈົ້າໄດ້ໂຕ້ຖຽງກັບພວກເຂົາ ແລະສາບແຊ່ງພວກເຂົາ ແລະຕີພວກເຂົາບາງຄົນ ແລະ
ດຶງຜົມຂອງພວກເຂົາອອກ ຂ້າພະເຈົ້າໃຫ້ພວກເຂົາປະຕິຍານໃນພຣະນາມຂອງພຣະເຈົ້າ ໂດຍ
ທີ່ຂ້າພະເຈົ້າກ່າວວ່າ "ເຈົ້າທັງຫຼາຍຢ່າຍົກລູກສາວຂອງເຈົ້າໃຫ້ແກ່ລູກຊາຍຂອງພວກເຂົາ ຢ່າ
ຮັບລູກສາວຂອງພວກເຂົາໃຫ້ເປັນເມຍລູກຊາຍຂອງເຈົ້າດ້ວຍຕົວເຈົ້າເອງ [26]ໂຊໂລໂມນກະສັດ
ແຫ່ງອິສຣາເອນ ບໍ່ໄດ້ເຮັດບາບດ້ວຍເລື່ອງຢ່າງນີ້ບໍ ໃນທ່າມກາງປະຊາຊາດ ບໍ່ມີກະສັດໃດ
ເໝືອນພະອົງ ແລະພຣະເຈົ້າຂອງພະອົງກໍຊົງຮັກພະອົງ ພຣະເຈົ້າຊົງເຮັດໃຫ້ພະອົງເປັນກະ-
ສັດເໜືອອິສຣາເອນທັງປວງ ແລ້ວເມຍຕ່າງຊາດຂອງພະອົງກໍເປັນເຫດໃຫ້ພະອົງເຮັດບາບ
[27]ພວກເຮົາຄວນທີ່ຈະຟັງເຈົ້າ ແລະກະທຳຄວາມຊົ່ວຮ້າຍທັງຫລາຍນີ້ ໂດຍເຮັດບໍ່ສັດຊື່ຕໍ່ພຣະ-
ເຈົ້າຂອງເຮົາດ້ວຍການແຕ່ງງານກັບຍິງຕ່າງຊາດບໍ"

[28]ລູກຊາຍຄົນໜຶ່ງຂອງໂຢຢາດາ ຜູ້ເປັນລູກຊາຍເອລີຢາຊິບມະຫາປະໂລຫິດ ເປັນລູກເຂີຍ
ຂອງສັນບັນລັດ ຊາວເບັດໂຮໂຣນ ເພາະສະນັ້ນ ຂ້າພະເຈົ້າຈຶ່ງຂັບໄລ່ພວກເຂົາໄປຈາກຂ້າ-
ພະເຈົ້າ

[29]"ຂ້າແດ່ພຣະເຈົ້າຂອງຂ້າພະອົງ ຂໍຊົງລະນຶກເຖິງພວກເຂົາທັງຫຼາຍ ເພາະວ່າພວກເຂົາໄດ້
ເຮັດໃຫ້ການເປັນປະໂລຫິດ ແລະພັນທະສັນຍາຂອງພວກປະໂລຫິດ ແລະພວກເລວີເປັນມົນທິນ"

[30]ດັ່ງນີ້ແຫລະ ຂ້າພະເຈົ້າໄດ້ຊຳລະລ້າງພວກເຂົາຈາກຊາວຕ່າງດ້າວທຸກຢ່າງ ແລະຂ້າພະ-
ເຈົ້າໄດ້ຕັ້ງໜ້າທີ່ຂອງບັນດາປະໂລຫິດ ແລະພວກເລວີຕ່າງກໍປະຈຳງານຂອງຕົນ

[31]ຂ້າພະເຈົ້າໄດ້ຈັດໃຫ້ຫາຟືນຖວາຍຕາມເວລາກຳນົດໄວ້ ແລະໝາກໄມ້ຫົວປີດ້ວຍ "ຂ້າແດ່
ພຣະເຈົ້າຂອງຂ້າພະອົງ ຂໍຊົງລະນຶກເຖິງຂ້າພະອົງດ້ວຍການດີເທີ້ນ"

# ເອສະເທີ

## ບົດທີ 1

### ພະລາຊິນີວາຊາຕີຂັດຄຳສັ່ງຂອງກະສັດ

1ຢູ່ມາໃນສະໄໝຂອງ ເຊເຊັດ (ເຊເຊັດໄດ້ປົກຄອງຕັ້ງແຕ່ປະເທດອິນເດຍ ເຖິງປະເທດເອ-
ທີໂອເປຍ ເໜືອ ໜຶ່ງຮ້ອຍຊາວເຈັດແຂວງ) 2ໃນສະໄໝນັ້ນເມື່ອກະສັດ ເຊເຊັດປະທັບເທິງລາຊະ
ບັນລັງຂອງພະອົງ ໃນ ເມືອງ ຊູຊາ ທີ່ ເປັນ ເມືອງມະຫານະຄອນ 3ໃນປີທີສາມໃນການປົກຄອງ
ຂອງພະອົງ, ພະອົງໄດ້ຈັດງານກິນລ້ຽງແກ່ພວກເຈົ້ານາຍ ແລະບັນດາຂ້າລາຊະການຂອງພະ
ອົງ, ພວກເຈົ້ານາຍກອງທັບແຫ່ງ ເປີເຊຍ ແລະ ເມເດຍ ພ້ອມທັງຂ້າລາຊະການກັບຜູ້ປົກຄອງ
ແຂວງ ໄດ້ເຝົ້າຢູ່ຕໍ່ໜ້າກະສັດ

4ຂະນະທີ່ກະສັດສະແດງລາຊະສົມບັດແຫ່ງລາຊະອານາຈັກອັນຮຸ່ງເຮືອງຂອງພະອົງ ທັງ
ຄວາມງົດງາມທີ່ຍິ່ງໃຫຍ່ຂອງພະອົງຢູ່ເປັນເວລາຫລາຍມື້ເຖິງໜຶ່ງຮ້ອຍແປດສິບມື້ 5ເມື່ອຜ່ານວັນ
ເຫລົ່ານີ້ໄປແລ້ວ, ກະສັດໄດ້ຈັດງານກິນລ້ຽງໃຫ້ແກ່ບັນດາປະຊາຊົນຜູ້ຢູ່ໃນນະຄອນຊູຊາ ທັງຜູ້
ໃຫຍ່ ແລະຜູ້ນ້ອຍ ເປັນເວລາເຈັດມື້ຢູ່ໃນສວນອຸທະຍານແຫ່ງລາຊະວັງຂອງກະສັດ 6ພວກເພິ່ນ
ໄດ້ເອົາທຸງສີຂາວ ສີຂຽວ ແລະສີມ່ວງເຂັ້ມ ມັດໄວ້ດ້ວຍເຊືອກປ່ານເນື້ອລະອຽດສີຟ້າ ແລະ
ປອກເງິນສຳລັບສຸບເສົາຫີນຂາວເຫລື້ອມ, ທັງຕຽງຄຳ ແລະຕຽງເງິນວາງໄວ້ເທິງພື້ນຫີນປູນສີ-
ແດງ, (ສີຂາວເຫລື້ອມ) ຫີນອ່ອນ ມຸກດາ ແລະຫີນອ່ອນສີດຳ 7ເຄື່ອງດື່ມກໍໃສ່ໂອຄຳ, ຈອກ
ຄຳຫລາຍຊະນິດ ແລະມີເຫລົ້າອະງຸ່ນຂອງລາຊະສຳນັກຢ່າງບໍລິບູນຕາມພະ ໄທທີ່ກວ້າງຂວາງ
ຂອງກະສັດ 8ການດື່ມກໍເຮັດກັນຕາມກົດໝາຍທີ່ບໍ່ມີການບັງຄັບ ເພາະກະສັດໄດ້ອອກຄຳສັ່ງໄປ
ຍັງພະນັກງານທັງປວງ ພາຍໃນລາຊະວັງວ່າ ໃຫ້ທຸກຄົນເຮັດຕາມໃຈປາດຖະໜາ 9ມະເຫສີວາ
ຊາຕີກໍໄດ້ຈັດງານກິນລ້ຽງແກ່ສະຕີໃນລາຊະວັງ ຊຶ່ງເປັນຂອງກະສັດ ເຊເຊັດດ້ວຍ

10ໃນມື້ທີເຈັດ ເມື່ອພະໄທຂອງກະສັດມ່ວນຊື່ນດ້ວຍເຫລົ້າອະງຸ່ນ ພະອົງໄດ້ບອກ ເມຮຸມານ,
ບິດຊະທາ ຮາໂບນາ, ບິກທາ, ອາບັກທາ, ເຊທາ ແລະ ກາກັດ ຊາຍຕອນທັງເຈັດ ຜູ້ບົວລະ-
ບັດຢູ່ຕໍ່ໜ້າກະສັດ ເຊເຊັດ 11ໃຫ້ໄປເຊີນມະເຫສີວາຊາຕີມາເຝົ້າກະສັດໂດຍຖືມົງກຸດແຫ່ງລາຊະ
ອານາຈັກ ເພື່ອຈະໃຫ້ປະຊາຊົນ ແລະເຈົ້ານາຍຂອງພະອົງໄດ້ຊົມສະຫງ່າລາສີໂສມໜ້າຂອງ
ພະນາງ ເພາະພະນາງງາມຫລາຍ 12ແຕ່ມະເຫສີວາຊາຕີໄດ້ປະຕິເສດບໍ່ມາຕາມຄຳສັ່ງຂອງກະ-
ສັດທີ່ຮັບສັ່ງໄປກັບພວກຊາຍຕອນ ເມື່ອເປັນເຊັ່ນນີ້ກະສັດໃຈຮ້າຍຫລາຍ ແລະຄວາມຄຽດຂອງ
ພະອົງກໍຮ້ອນຂຶ້ນຢູ່ພາຍໃນຕົວພະອົງເອງ

13ຝ່າຍກະສັດຈຶ່ງກ່າວກັບຄົນທີ່ມີປັນຍາຜູ້ຮູ້ກາລະເທສະ (ເພາະນີ້ເປັນວິທີດຳເນີນການຂອງ
ກະສັດຕໍ່ບັນດາຜູ້ທີ່ຮູ້ຈັກກົດໝາຍ ແລະການພິພາກສາ 14ຜູ້ທີ່ໃກ້ຊິດກະສັດກໍຄື ກາເຊນາ ເຊ-
ທາ ອັດມາທາ ຕາຊິດ ເມເຣັດ ມາເສນາ ແລະ ເມມູການ ຜູ້ທີ່ເປັນຫົວໜ້າທັງເຈັດຂອງ ເປີ-
ເຊຍ ແລະ ເມເດຍ ຜູ້ເຄີຍເຂົ້າເຝົ້າກະສັດ ແລະນັ່ງກ່ອນໃນລາຊະອານາຈັກ 15ວ່າ "ຕາມກົດ-

ໝາຍຈະຕ້ອງເຮັດຫຍັງຕໍ່ມະເຫສີ ວະຊະຕີ ເພາະວ່າພະນາງບໍ່ໄດ້ປະຕິບັດຕາມຄຳສັ່ງຂອງກະ-
ສັດ ເຊເຊັດ ທີ່ສັ່ງໄປກັບຊາຍຕອນ"
16ເມມູການ ຈຶ່ງທູນຕໍ່ກະສັດ ແລະເຈົ້ານາຍທັງປວງວ່າ "ມະເຫສີ ວະຊະຕີ ໄດ້ກະທຳຜິດບໍ່
ແມ່ນຕໍ່ກະສັດເທົ່ານັ້ນ ແຕ່ຕໍ່ພວກເຈົ້ານາຍທັງປວງ ແລະປະຊາຊົນທັງປວງຜູ້ທີ່ຢູ່ໃນແຂວງທັງ
ໝົດຂອງກະສັດ ເຊເຊັດ 17ເພາະສິ່ງທີ່ມະເຫສີໄດ້ກະທຳນີ້ເປັນທີ່ຮັບຮູ້ແກ່ສະຕີທັງປວງຈະເຮັດ
ໃຫ້ພວກນາງໝິ່ນປະໝາດຜົວຂອງຕົນ ເພາະພວກນາງຈະເວົ້າວ່າ 'ກະສັດ ເຊເຊັດ ມີຄຳສັ່ງໃຫ້
ນຳມະເຫສີ ວະຊະຕີ ສະເດັດມາພົບກະສັດ ແຕ່ພະນາງບໍ່ສະເດັດມາ' 18ແລະໃນມື້ນີ້ພວກເຈົ້າ
ນາຍຜູ້ຍິງແຫ່ງ ເປີເຊຍ ແລະ ເມເດຍ ຊຶ່ງໄດ້ຍິນເຖິງສິ່ງທີ່ມະເຫສີໄດ້ກະທຳນີ້ ກໍຈະເລົ່າໃຫ້ເຈົ້າ
ນາຍທັງປວງຂອງກະສັດໃຫ້ຮູ້ທົ່ວກັນ ເຮັດໃຫ້ມີການໝິ່ນປະໝາດ ແລະຄວາມຮ້າຍ ເກີດຂຶ້ນ
19ຖ້າເປັນທີ່ພໍພະໄທຂອງກະສັດ ຂໍໃຫ້ມີພະລາຊະດຳລັດຈາກກະສັດ ແລະໃຫ້ບັນທຶກໄວ້ໃນ
ກົດໝາຍຂອງຄົນ ເປີເຊຍ ແລະຄົນ ເມເດຍທີ່ຍົກເລີກບໍ່ໄດ້ວ່າ 'ວະຊະຕີ ຈະເຂົ້າເຝົ້າກະສັດ ເຊ-
ເຊັດ ອີກບໍ່ໄດ້' ແລະຕຳແໜ່ງລາຊີນີນັ້ນຈົ່ງມອບໃຫ້ແກ່ຜູ້ອື່ນທີ່ດີກວ່າພະນາງ 20ດັ່ງນັ້ນ ເມື່ອ
ກະສັດໄດ້ປະກາດດຳລັດທົ່ວທັງລາຊະອານາຈັກຂອງກະສັດ (ທີ່ກວ້າງໃຫຍ່ໄພສານນັ້ນ) ສະຕີ
ທັງປວງຈະຕ້ອງໃຫ້ກຽດຜົວຂອງຕົນບໍ່ວ່າສູງ ຫລືຕໍ່າ"
21ຄຳແນະນຳນີ້ເປັນທີ່ພໍພະໄທແກ່ກະສັດ ແລະບັນດາເຈົ້ານາຍ ກະສັດຈຶ່ງໄດ້ເຮັດຕາມທີ່ ເມ-
ມູການ ໄດ້ສະເໜີ 22ພະອົງໄດ້ມີໜັງສືໄປທົ່ວທຸກໆແຂວງ ເຖິງທຸກແຂວງຕາມຕົວອັກສອນຂອງ
ແຕ່ລະແຂວງນັ້ນ ແລະເຖິງທຸກຊາດຕາມພາສາຂອງເຂົາ ໃຫ້ຜູ້ຊາຍທຸກຄົນເປັນເຈົ້ານາຍໃນ
ເຮືອນຂອງຕົນ ແລະໃຫ້ປະກາດໜັງສືນີ້ຕາມພາສາຂອງແຕ່ລະຊົນຊາດ

# ບົດທີ 2

## ເອສະເທີຮັບຕຳແໜ່ງເປັນມະເຫສີ

1ພາຍຫລັງເຫດການເຫລົ່ານີ້ ເມື່ອຄວາມຄຽດຂອງກະສັດ ເຊເຊັດ ສະຫງົບລົງ ພະອົງໄດ້ລະ-
ນຶກເຖິງວາຊາຕີ ແລະສິ່ງທີ່ພະນາງໄດ້ເຮັດ ແລະຂໍ້ດຳລັດທີ່ຕົນໄດ້ອອກກ່ຽວກັບເລື່ອງຂອງພະ
ນາງ 2ຂ້າລາຊະການຂອງກະສັດຜູ້ບົວລະບັດພະອົງຢູ່ຈຶ່ງກາບທູນວ່າ "ຂໍໃຫ້ຫາຍິງພົມມະຈາລີ
ສາວງາມມາຖວາຍ ກະສັດເທີນ 3ແລະກະສັດໄດ້ແຕ່ງຕັ້ງເຈົ້າໜ້າທີ່ທຸກແຂວງ ແຫ່ງລາຊະອາ-
ນາຈັກຂອງພະອົງ ໃຫ້ຫາຍິງພົມມະຈາລີສາວທີ່ງົດງາມທັງຫລາຍມາທີ່ຮາເລັມໃນ ເມືອງມະຫາ
ນະຄອນຊູຊາ ໃຫ້ຢູ່ໃນການເບິ່ງແຍງຂອງ ເຮກາຍ ຊາຍຕອນຂອງກະສັດ ຜູ້ທີ່ເບິ່ງແຍງສະຕີ
ແລະຂໍປະທານເຄື່ອງແຕ່ງໜ້ານວດຕົວສຳລັບຍິງເຫລົ່ານັ້ນ 4ແລະຂໍໃຫ້ຍິງສາວຄົນທີ່ກະສັດພໍ
ພະໄທໄດ້ເປັນພະລາຊີນີແທນວາຊາຕີ" ຂໍ້ນີ້ພໍພະໄທກະສັດ ພະອົງຈຶ່ງເຮັດຕາມນັ້ນ
5ຍັງມີຊາວຢິວຄົນໜຶ່ງໃນມະຫານະຄອນຊູຊາຊື່ມໍເດກາຍ ລູກຊາຍຢາອີ ຜູ້ເປັນລູກຊາຍຊີ-
ເມອີ ຜູ້ເປັນລູກຊາຍກີເຊ ຄົນເບັນຢາມິນ 6ຜູ້ຖືກກວາດໄປຈາກເຢຣູຊາເລັມກັບພວກຊະເລີຍ
ທີ່ຖືກກວາດໄປພ້ອມກັບ ເຢໂຮຢາກິນກະສັດຂອງຢູດາ ຜູ້ຊຶ່ງ ເນບູກາດເນັດຊາກະສັດຂອງບາ-
ບີໂລນໄດ້ກວາດໄປນັ້ນ 7ເພິ່ນໄດ້ລ້ຽງດູຮາດາສາຄື ເອສະເທີ ລູກສາວລຸງຂອງຕົນ ເພາະນາງ

ບໍ່ມີພໍ່ແມ່ ຍິງສາວຄົນນີ້ມີຮູບຮ່າງໜ້າຕາງາມ ເມື່ອບິດາມານດາຂອງນາງເສຍຊີວິດແລ້ວ ມໍເດ-
ກາຍກໍຮັບເອົານາງມາລ້ຽງເປັນລູກສາວ
[8]ຕໍ່ມາ ເມື່ອຄຳສັ່ງຂອງກະສັດ ແລະຂໍ້ດຳລັດຂອງພະອົງປະກາດອອກໄປ ແລະເມື່ອພວກ
ເຂົາໄດ້ຮວບຮວມຍິງ ສາວທັງຫລາຍເຂົ້າມາໃນນະຄອນຊູຊາ ໂດຍໄດ້ຮັບການເບິ່ງແຍງຈາກ ເຮ-
ກາຍ ເອສະເທີ ກໍຖືກນຳເຂົ້າມາໄວ້ໃນລາຊະວັງ ເໝືອນກັນ ໂດຍຢູ່ພາຍໃຕ້ການ ເບິ່ງແຍງຂອງ
ເຮກາຍຜູ້ທີ່ເບິ່ງແຍງສະຕີ [9]ຍິງນັ້ນເປັນທີ່ພໍໃຈແກ່ລາວ ລາວຈຶ່ງຟ້າວເອົາເຄື່ອງແຕ່ງຕົວ, ເຄື່ອງ
ຫອມ ແລະ ສ່ວນຂອງນາງໃຫ້ນາງ ພ້ອມກັບສາວໃຊ້ທີ່ໄດ້ຄັດເລືອກແລ້ວເຈັດຄົນຈາກລາຊະ
ວັງ ແລ້ວກໍຍ້າຍນາງ ແລະສາວໃຊ້ຂອງນາງຂຶ້ນໄປຍັງສະຖານທີ່ທີ່ດີທີ່ສຸດໃນຮາເລັມ
[10]ເອສະເທີ ບໍ່ໄດ້ບອກວ່າຕົນ ເປັນຄົນສັນຊາດໃດ ແລະຕະກູນຂອງນາງດ້ວຍ ເພາະ ມໍເດ-
ກາຍ ສັ່ງນາງບໍ່ໃຫ້ບອກໃຜ [11]ທຸກໆມື້ ມໍເດກາຍ ຍ່າງມາໜ້າລານ (ເດີ່ນຂອງພວກຜູ້ຍິງ) ຂອງ
ຮາເລັມ ເພື່ອຟັງຂ່າວ ເອສະເທີ ເປັນຢ່າງໃດ ແລະມີຫຍັງເກີດຂຶ້ນແກ່ນາງ
[12]ເມື່ອເຖິງຍາມທີ່ສາວໆທຸກຄົນຈະເຂົ້າໄປເຝົ້າກະສັດ ເຊເຊັດ ຫລັງຈາກໄດ້ຕຽມຕົວຕາມລະ-
ບຽບຂອງຍິງສາວໄດ້ສິບສອງ ເດືອນແລ້ວ (ແລະນີ້ເປັນເວລາປົກກະຕິສຳລັບ ແຕ່ງໜ້ານວດຕົວ
ຄືທົດສົງກາຍຜູ້ຍິງດ້ວຍນໍ້າມັນກຳຍານຫົກເດືອນ ແລະຫົກເດືອນດ້ວຍເຄື່ອງຫອມ ແລະນໍ້າມັນ
ແຕ່ງໜ້ານວດຕົວຜູ້ຍິງ) [13]ເມື່ອຍິງສາວທຸກຄົນຈະເຂົ້າໄປເຝົ້າກະສັດຢ່າງນີ້ ພວກນາງຈະຕ້ອງ-
ການ ເອົາຫຍັງຈາກຮາເລັມໄປຍັງລາຊະສຳນັກ ກໍເອົາໄປໄດ້ [14]ເອສະເທີ ເຂົ້າໄປເຝົ້າຕອນຄໍ່າ
ແລະໃນຕອນເຊົ້ານາງກັບອອກມາໃນຮາເລັມທີສອງ ໂດຍຢູ່ພາຍໃຕ້ໃນການ ເບິ່ງແຍງຂອງຊາ-
ອັດຊະກັດ ຊາຍຕອນຂອງກະສັດຜູ້ເບິ່ງແຍງພວກເມຍນ້ອຍ ນາງຈະບໍ່ໄດ້ເຂົ້າໄປເຝົ້າກະສັດອີກ
ນອກຈາກກະສັດຈະພໍພະໄທໃນຕົວນາງ ແລະໄດ້ເອີ້ນຊື່ນາງໃຫ້ເຂົ້າເຝົ້າ
[15]ເມື່ອເຖິງຜຽນຂອງ ເອສະເທີ ລູກສາວຂອງ ອາບີຮາຍ ລຸງຂອງ ມໍເດກາຍ ຜູ້ຊຶ່ງຮັບນາງໄວ້
ເປັນລູກສາວ ຈະເຂົ້າ ເຝົ້າກະສັດ ນາງບໍ່ໄດ້ຂໍສິ່ງໃດນອກຈາກສິ່ງທີ່ ເຮກາຍ ຊາຍຕອນຂອງ
ກະສັດຜູ້ເບິ່ງແຍງສະຕີແນະນຳ ຝ່າຍ ເອສະເທີ ເປັນທີ່ຖືກໃຈໃນສາຍຕາຂອງທຸກຄົນທີ່ເຫັນນາງ
[16]ເມື່ອພວກເຂົາພາ ເອສະເທີ ເຂົ້າໄປເຝົ້າກະສັດ ເຊເຊັດ ໃນພະລາຊະວັງ ໃນເດືອນສິບ ຊຶ່ງເປັນ
ເດືອນ ເຕເບັດ ໃນປີທີເຈັດແຫ່ງລາຊະການຂອງພະອົງ [17]ກະສັດຮັກ ເອສະເທີ ຫລາຍກວ່າຍິງ
ອື່ນທັງໝົດ ແລະນາງໄດ້ຮັບພະກະລຸນາ ແລະຄວາມຍິນດີໃນສາຍຕາຂອງພະອົງຫລາຍກວ່າ
ຍິງພົມມະຈາລີທັງໝົດ ຈຶ່ງໄດ້ສວມມົງກຸດເທິງຫົວຂອງນາງ ແລະໄດ້ຕັ້ງນາງໃຫ້ເປັນພະລາຊີນີ
ແທນ ວະຊະຕີ [18]ແລ້ວກະສັດໄດ້ຈັດງານກິນລ້ຽງໃຫຍ່ແກ່ເຈົ້ານາຍ ແລະຂ້າລາຊະການທັງປວງ
ຂອງພະອົງ ເປັນການກິນລ້ຽງຂອງພະນາງ ເອສະເທີ ພະອົງໄດ້ຍົກໜີ້ເສຍສ່ວຍ ແກ່ແຂວງທັງ
ປວງ ແລະໃຫ້ຂອງຂວັນດ້ວຍພະໄທອັນກວ້າງຂວາງຂອງກະສັດ
[19]ເມື່ອ ພວກ ເຂົາຮວບຮວມຍິງພົມມະຈາລີ ມາ ເທື່ອທີສອງ ມໍເດກາຍ ກຳລັງນັ່ງຢູ່ທີ່ປະຕູຂອງ
ກະສັດ [20]ຝ່າຍພະນາງ ເອສະເທີ ນັ້ນບໍ່ໄດ້ໃຫ້ໃຜຮູ້ເຖິງຕະກຸນ ຫລືຊົນຊາດຂອງພະນາງດັ່ງທີ່ ມໍ-
ເດກາຍ ສັ່ງແກ່ພະນາງໄວ້ ເພາະພະນາງ ເອສະເທີ ໄດ້ເຮັດຕາມຄຳສັ່ງຂອງ ມໍເດກາຍ ເຊັ່ນດຽວ
ກັບເມື່ອລາວລ້ຽງດູພະນາງມາ

## ມໍເດກາຍຊ່ວຍຊີວິດຂອງກະສັດ

[21]ໃນຄາວນັ້ນເມື່ອ ມໍເດກາຍ ນັ່ງຢູ່ທີ່ປະຕູຂອງກະສັດ ບິກທານາ ແລະ ເຕເຣັດ ຊາຍຕອນ
ສອງຄົນຂອງກະສັດ ຜູ້ເຝົ້າປະຕູ ມີຄວາມຮ້າຍ ແລະຫາທາງທີ່ຈະທຳຮ້າຍກະສັດ ເຊເຊັດ
[22]ເລື່ອງນີ້ຮູ້ເຖິງ ມໍເດກາຍ ເພິ່ນກໍທູນພະລາຊີນີ ເອສະເທີ ພະນາງ ເອສະເທີກາບທູນກະສັດໃນ
ນາມຂອງ ມໍເດກາຍ [23]ເມື່ອມີການສອບສວນເລື່ອງນີ້ວ່າເປັນຄວາມຈິງແລ້ວ ກະສັດກໍໄດ້ໃຫ້ຈັບ
ສອງຄົນນັ້ນແຂວນໄວ້ທີ່ຕົ້ນໄມ້ ແລະບັນທຶກເລື່ອງໄວ້ໃນໜັງສືຂ່າວຄາວຕໍ່ໜ້າກະສັດ

# ບົດທີ 3

## ຮາມານວາງແຜນຮ້າຍທີ່ຈະທຳລາຍຄົນຢິວທັງໝົດ

[1]ພາຍຫລັງເຫດການເຫລົ່ານີ້ ກະສັດ ເຊເຊັດ ໄດ້ເລື່ອນຍົດ ຮາມານ ລູກຊາຍ ຮຳເມດາທາ ຄົນ
ອັກອາກ ກະສັດໄດ້ເລື່ອນຕຳແໜ່ງຂອງລາວ ແລະໃຫ້ນັ່ງສູງກວ່າເຈົ້ານາຍທັງປວງທີ່ຢູ່ກັບ ຮາ-
ມານ [2]ບັນດາຂ້າລາຊະການຂອງກະສັດຊຶ່ງຢູ່ທີ່ປະຕູຂອງກະສັດ ກໍກາບລົງສະແດງຄວາມ
ເຄົາລົບຕໍ່ ຮາມານ ເພາະກະສັດໄດ້ສັ່ງໃຫ້ສະແດງຄວາມເຄົາລົບຕໍ່ເພິ່ນເຊັ່ນນັ້ນ ແຕ່ ມໍເດກາຍບໍ່
ໄດ້ກາບ ຫລືສະແດງຄວາມເຄົາລົບ

[3]ຂ້າລາຊະການຂອງກະສັດ ຊຶ່ງຢູ່ທີ່ປະຕູຂອງກະສັດຈຶ່ງ ເວົ້າກັບ ມໍເດກາຍ ວ່າ “ເປັນຫຍັງ
ທ່ານຈຶ່ງລະເມີດຄຳສັ່ງຂອງກະສັດ” [4]ຢູ່ມາ ເມື່ອພວກເຂົາເວົ້າກັບເພິ່ນຕະຫລອດ ເພິ່ນບໍ່ຟັງ
ພວກເຂົາ ພວກເຂົາກໍໄປຮຽນ ຮາມານ ເພື່ອຈະເບິ່ງວ່າຖ້ອຍຄຳຂອງ ມໍເດກາຍ ຈະຊະນະຫລືບໍ່
ເພາະເພິ່ນບອກພວກເຂົາວ່າ ຕົນເປັນຊາວຢິວ

[5]ເມື່ອ ຮາມານ ເຫັນວ່າ ມໍເດກາຍບໍ່ກາບລົງ ຫລືສະແດງຄວາມເຄົາລົບຕໍ່ຕົນ ຮາມານກໍດ່າວ່າ
[6]ແຕ່ເພິ່ນ ເຫັນວ່າເປັນການ ເສຍກຽດທີ່ຈະຈັບກຸມ ມໍເດກາຍ ຄົນດຽວ ເພາະມີຄົນຮຽນເພິ່ນໃຫ້ຮູ້
ເຖິງຊົນຊາດຂອງ ມໍເດກາຍ ຮາມານ ຈຶ່ງຫາທາງທີ່ຈະທຳລາຍຊາວຢິວທັງໝົດ ຄືຊົນຊາດຂອງ
ມໍເດກາຍທົ່ວລາຊະອານາຈັກຂອງ ເຊເຊັດ

[7]ໃນເດືອນທຳອິດ ຊຶ່ງເປັນເດືອນ ນີສານ ໃນປີທີສິບສອງ ແຫ່ງລາຊະການຂອງກະສັດ ເຊເຊັດ
ພວກເຂົາພາກັນ ຫວ່ານ ປູຣິມ ຄືສະຫລາກ ຕໍ່ໜ້າ ຮາມານ ເພື່ອຫາມື້ ແລະຫາເດືອນ ໄດ້
ເດືອນທີສິບສອງ ຄືເດືອນ ອັດດາ

[8]ແລ້ວ ຮາມານ ທູນກະສັດ ເຊເຊັດ ວ່າ “ມີຊົນຊາດໜຶ່ງກະແຈກກະຈາຍຢູ່ທົ່ວໄປ ແລະແຍກ
ກັນຢູ່ທ່າມກາງ ຊົນຊາດທັງຫລາຍໃນບັນດາແຂວງ ແຫ່ງລາຊະອານາຈັກຂອງພະອົງ ກົດໝາຍ
ຂອງພວກເຂົາຜິດກັບກົດໝາຍຂອງຊົນຊາດອື່ນທັງໝົດ ແລະພວກນີ້ບໍ່ຮັກສາກົດໝາຍຂອງກະ-
ສັດ ການທີ່ກະສັດໄດ້ປ່ອຍພວກເຂົາໄວ້ນີ້ຈະບໍ່ ບັງເກີດປະໂຫຍດແກ່ພະອົງເອງ [9]ຖ້າເປັນທີ່ພໍ
ພະໄທກະສັດ ຂໍໄດ້ອອກຄຳສັ່ງໃຫ້ທຳລາຍລ້າງພວກເຂົາສາ ແລະຂ້າພະອົງຈະຖວາຍເງິນໜຶ່ງ
ໝື່ນຕະລັນຕົນໃສ່ມືບັນດາຜູ້ທີ່ເບິ່ງແຍງລາດຊະກິດຂອງກະສັດ ເພື່ອພວກເຂົາຈະໄດ້ໃສ່ໃນພະ
ຄັງຂອງກະສັດ”

[10]ກະສັດຈຶ່ງຖອດແຫວນກາອອກຈາກພະຫັດຂອງພະອົງມອບແກ່ ຮາມານ ລູກຊາຍ ຮຳເມ-

ດາຫາ ຄົນອັກອາກ ສັດຕູຂອງຊາວຢິວ [11]ແລະກະສັດກ່າວກັບຮາມານວ່າ "ເຮົາມອບເງິນ
ນັ້ນໃຫ້ແກ່ທ່ານ ແລະມອບປະຊາຊົນແກ່ທ່ານດ້ວຍ ເພື່ອຈະເຮັດແກ່ພວກເຂົາຕາມທີ່ທ່ານເຫັນ
ດີ"

[12]ແລ້ວໄດ້ເອີ້ນເລຂາເຂົ້າມາໃນວັນທີສິບສາມຂອງເດືອນຈຽງ ໃຫ້ຂຽນດຳລັດຕາມທີ່ຮາມານ
ສັ່ງໄວ້ທຸກປະ ການ ສົ່ງໄປຍັງຜູ້ປົກຄອງແຂວງຂອງກະສັດ ແລະຜູ້ປົກຄອງເມືອງທັງປວງ
ເຖິງເຈົ້ານາຍແຫ່ງຊົນຊາດທັງປວງ ໃນທຸກໆແຂວງຕາມອັກສອນຂອງພວກເຂົາ ແລະເຖິງຄົນ
ທຸກຊາດຊຶ່ງເປັນພາສາຂອງພວກເຂົາຂຽນໃນພະນາມຂອງກະສັດເຊເຊັດ ແລະປະທັບກາດ້ວຍ
ແຫວນຂອງກະສັດ [13]ໃຫ້ຄົນສົ່ງຂ່າວສົ່ງຈົດໝາຍເຫລົ່ານີ້ໄປເຖິງແຂວງຂອງກະສັດທັງໝົດ
ໂດຍສັ່ງໃຫ້ທຳລາຍ ສັງຫານ ແລະເຮັດໃຫ້ຊາວຢິວທັງໝົດຈິບຫາຍໄປ ທັງຄົນໜຸ່ມ ແລະເຖົ້າ
ແກ່ ຜູ້ຍິງ ແລະເດັກນ້ອຍໃນມື້ດຽວກັນ ຄືວັນທີສິບສາມເດືອນທີສິບສອງ ຊຶ່ງເປັນເດືອນອັດດາ
ແລະໃຫ້ຍຶດເອົາສິ່ງເຂົ້າຂອງຂອງພວກເຂົາໄປໝົດ [14]ພວກເຂົາໄດ້ອອກສຳເນົາໜັງສືຈາກດຳ-
ລັດນັ້ນ ໃຫ້ປະກາດໃນທຸກແຂວງ ເພື່ອໃຫ້ຊົນຊາດທັງປວງຮູ້ ແລະເພື່ອພວກເຂົາຈະກຽມພ້ອມ
ໃນມື້ກຳນົດນັ້ນ [15]ບັນດາຄົນສົ່ງຂ່າວກໍຮີບຟ້າວໄປຕາມຮັບສັ່ງຂອງກະສັດ ແລະອອກດຳລັດນັ້ນ
ໃນນະຄອນຊູຊາ ກະສັດກໍນັ່ງດື່ມກັບຮາມານ ສ່ວນຊາວນະຄອນຊູຊາພາກັນອຸ້ນວາຍຕົກໃຈ
ຫລາຍ

# ບົດທີ 4

## ພວກຢິວຖືສິນອົດອາຫານ

[1]ເມື່ອມໍເດກາຍໄດ້ຍິນທຸກຢ່າງທີ່ໄດ້ປະກາດໄປແລ້ວນັ້ນ ມໍເດກາຍກໍຈີກເສື້ອຂອງຕົນນຸ່ງຜ້າ
ກະສອບ ແລະໃສ່ຂີ້ເຖົ່າໄຟ ແລ້ວອອກໄປກາງເມືອງ ຮ້ອງຄາງດ້ວຍສຽງດັງຢ່າງຂົມຂື່ນ [2]ເພິ່ນ
ຂຶ້ນໄປຢູ່ຕໍ່ໜ້າປະຕູຂອງກະສັດ ເພາະບໍ່ມີຜູ້ໃດທີ່ນຸ່ງຜ້າກະສອບເຂົ້າປະຕູຂອງກະສັດໄດ້ [3]ແລະ
ໃນທຸກແຂວງທີ່ຄຳສັ່ງຂອງກະສັດ ແລະດຳລັດຂອງເພິ່ນໄປເຖິງ ກໍມີການໄວ້ທຸກຢ່າງໃຫຍ່
ຫລວງທ່າມກາງພວກຢິວ ດ້ວຍການອົດອາຫານ ຮ້ອງໄຫ້ ແລະຮ້ອງຄາງ ຄົນເປັນຈຳນວນ
ຫລາຍໄດ້ເອົາຜ້າກະສອບ ແລະມີຂີ້ເຖົ່າປູບ່ອນນອນ [4]ເມື່ອສາວໃຊ້ ແລະຊາຍຕອນຂອງພະ
ນາງເອສະເທີມາທູນພະນາງ ມະເຫສີກໍເປັນທຸກໃຈຫລາຍ ພະນາງໄດ້ສົ່ງເສື້ອຜ້າໄປໃຫ້ມໍເດ-
ກາຍ ເພື່ອເພິ່ນຈະໄດ້ຖອດຜ້າກະສອບຂອງເພິ່ນອອກ ແຕ່ເພິ່ນບໍ່ຍອມຮັບຜ້ານັ້ນ [5]ແລ້ວພະ
ນາງເອສະເທີມີຄຳສັ່ງເອີ້ນຮາທາກຊາຍຕອນຄົນໜຶ່ງຂອງກະສັດ ຜູ້ຊຶ່ງພະອົງໄດ້ແຕ່ງຕັ້ງໃຫ້
ບົວລະ ບັດ ພະນາງກ່າວສັ່ງໃຫ້ໄປຫາມໍເດກາຍ ເພື່ອຈະໄດ້ຮູ້ວ່າເລື່ອງຫຍັງ ແລະເປັນຫຍັງ
ຈຶ່ງເຮັດຢ່າງນັ້ນ [6]ຮາທາກອອກໄປຫາມໍເດກາຍຢູ່ທີ່ຖະໜົນໃນເມືອງຕໍ່ໜ້າປະຕູຂອງກະສັດ
[7]ມໍເດກາຍກໍເລົ່າເລື່ອງທັງໝົດທີ່ເກີດແກ່ເພິ່ນ ແລະຈຳນວນເງິນທີ່ຮາມານສັນຍາຖວາຍແກ່ພະ
ຄັງຂອງກະສັດ ເພື່ອການທຳລາຍພວກຢິວ [8]ມໍເດກາຍຍັງໄດ້ໃຫ້ໃບໜັງສືສຳເນົາທີ່ຂຽນອອກ
ປະກາດໃນນະຄອນຊູຊາສັ່ງໃຫ້ທຳລາຍພວກເຂົານັ້ນ ເພື່ອນຳໄປສະແດງແກ່ພະນາງເອສະເທີ
ແລະອະທິບາຍເລື່ອງລາວໃຫ້ພະນາງ ທັງສັ່ງໃຫ້ພະນາງເຂົ້າເຝົ້າກະສັດເພື່ອອ້ອນວອນພະອົງ

ໃຫ້ເຫັນແກ່ຊົນຊາດຂອງພະນາງ 9ຮາທາກກໍກັບໄປທູນພະນາງ ເອສະເທີ ເຖິງສິ່ງທີ່ ມໍເດກາຍ
ໄດ້ບອກໄວ້

10ແລ້ວພະນາງ ເອສະເທີ ກໍບອກ ຮາທາກ ໃຫ້ສົ່ງຂ່າວໄປໃຫ້ ມໍເດກາຍ ວ່າ 11"ຂ້າລາຊະການ
ຂອງກະສັດທັງໝົດ ແລະປະຊາຊົນໃນບັນດາແຂວງຂອງກະສັດຮູ້ຢູ່ວ່າ "ຖ້າຊາຍ ຫລືຍິງຄົນ
ໃດເຂົ້າເຝົ້າກະສັດພາຍໃນພະລານຊັ້ນໃນໂດຍບໍ່ໄດ້ເອີ້ນນັ້ນ ມີກົດໝາຍຢູ່ຂໍ້ດຽວຊຶ່ງຄືກັນໝົດຄື:
ລົງໂທດເຖິງຕາຍ ເວັ້ນໄວ້ແຕ່ຜູ້ຊຶ່ງກະສັດຍື່ນໄມ້ເທົ້າຄຳອອກຮັບ ຄົນນັ້ນຈຶ່ງຈະມີຊີວິດຢູ່ໄດ້
ສ່ວນຂ້ອຍ ກະສັດກໍບໍ່ໄດ້ກ່າວເອີ້ນໃຫ້ເຂົ້າເຝົ້າມາສາມສິບມື້ແລ້ວ"

12ແລະພວກເຂົາກໍມາບອກ ມໍເດກາຍ ເຖິງສິ່ງທີ່ພະນາງ ເອສະເທີ ໄດ້ກ່າວນັ້ນ 13ມໍເດກາຍ ຈຶ່ງ
ບອກພວກເຂົາໃຫ້ກັບໄປທູນຕອບພະນາງ ເອສະເທີ ວ່າ "ຢ່າຊູ່ຄິດວ່ານາງຢູ່ໃນລາຊະວັງຈະ
ລອດພົ້ນໄດ້ດີກວ່າພວກຢິວທັງປວງ 14ເພາະຖ້ານາງງຽບຢູ່ໃນເວລານີ້ ຄວາມຊ່ວຍເຫລືອ ແລະ
ການຊ່ວຍໃຫ້ພົ້ນຈະມາເຖິງພວກຢິວຈາກບ່ອນອື່ນ ແຕ່ນາງ ແລະເຊື້ອສາຍພໍ່ຂອງນາງຈະຈິບ-
ຫາຍ, ທີ່ຈິງນາງມາຮັບຕຳແໜ່ງລາຊີນີກໍເພື່ອຍາມຫຍຸ້ງຍາກເຊັ່ນນີ້ ອາດເປັນໄດ້ໃຜຈະຮູ້"

15ແລ້ວ ເອສະເທີ ກ່າວບອກເຂົາໃຫ້ໄປບອກ ມໍເດກາຍ ວ່າ 16"ໄປສາ ໃຫ້ຮວບຮວມພວກຢິວ
ທັງໝົດທີ່ຊອກພົບໃນນະຄອນ ຊູຊາ ແລະຖືສິນອົດອາຫານເພື່ອຂ້ອຍ ຢ່າຊູ່ກິນ ຢ່າຊູ່ດື່ມໃນ
ລະຫວ່າງສາມມື້ທັງກາງຄືນ ຫລືກາງເວັນ ຂ້ອຍ ແລະສາວໃຊ້ຂອງຂ້ອຍຈະອົດອາຫານເໝືອນ
ກັບພວກທ່ານດ້ວຍ ແລ້ວຂ້ອຍຈະເຂົ້າເຝົ້າກະສັດເຖິງວ່າເປັນການຝ່າຝືນກົດໝາຍ ຖ້າຂ້ອຍ
ຈິບຫາຍຂ້ອຍກໍຈິບຫາຍ"

17ມໍເດກາຍ ກໍໄປເຮັດທຸກຢ່າງຕາມທີ່ພະນາງ ເອສະເທີ ສັ່ງແກ່ຕົນ

# ບົດທີ 5

## ມະເຫສີເອສະເທີເຊີນກະສັດ ແລະຮາມານມາໃນງານກິນລ້ຽງ

1ຢູ່ມາໃນວັນທີສາມ ພະນາງ ເອສະເທີ ໄດ້ນຸ່ງເສື້ອຜ້າມະເຫສີ ແລະປະທັບຢືນຢູ່ໃນເດີ່ນຊັ້ນ
ໃນຂອງພະລາດ ຊະວັງ ກົງກັນຂ້າມກັບຫ້ອງໂຖງໃຫຍ່ຂອງກະສັດ ກະສັດປະທັບເທິງລາຊະ
ບັນລັງພາຍໃນພະລາຊະວັງ ກົງກັນຂ້າມທາງເຂົ້າພະລາຊະວັງ 2ເມື່ອກະສັດຫລຽວເຫັນພະລາ-
ຊີນີ ເອສະເທີ ຢືນຢູ່ໃນເດີ່ນ ພະນາງກໍເປັນທີ່ພໍພະໄທໃນສາຍຕາຂອງພະອົງ ພະອົງຈຶ່ງຍື່ນໄມ້-
ເທົ້າຄຳ ຊຶ່ງຢູ່ໃນພະຫັດຂອງພະອົງແກ່ພະນາງ ເອສະເທີ ພະນາງ ເອສະເທີ ກໍສະເດັດເຂົ້າມາ
ຈັບປາຍໄມ້ເທົ້າ

3ກະສັດກ່າວກັບພະນາງວ່າ "ມະເຫສີ ເອສະເທີ ຢາກໄດ້ສິ່ງໃດ ພະນາງຕ້ອງການສິ່ງໃດ ກໍ
ຈະປະທານໃຫ້ແກ່ພະນາງເຖິງເຄິ່ງລາຊະອານາຈັກຂອງເຮົາ"

4ແລະພະນາງ ເອສະເທີ ທູນວ່າ "ຖ້າເປັນທີ່ພໍພະໄທກະສັດ ຂໍກະສັດສະເດັດມາພ້ອມກັບຮາ-
ມານ ໃນມື້ນີ້ ເພື່ອງານລ້ຽງທີ່ຂ້ານ້ອຍຈັດຕຽມໄວ້ເພື່ອພະອົງ" 5ແລະກະສັດໄດ້ຕອບວ່າ "ຈົ່ງ
ຟ້າວໄປຫາ ຮາມານ ເພື່ອເພິ່ນຈະໄດ້ເຮັດຕາມທີ່ພະນາງ ເອສະເທີ ປາດຖະໜາ" ກະສັດຈຶ່ງສະ-
ເດັດໄປໃນງານກິນລ້ຽງກັບ ຮາມານ ຊຶ່ງພະນາງ ເອສະເທີ ໄດ້ຈັດຕຽມໄວ້ 6ຂະນະທີ່ຢູ່ໃນງານ

ກິນລ້ຽງ ກຳລັງດື່ມເຫລົ້າອະງຸ່ນ ກະສັດກໍກ່າວກັບ ເອສະເທີວ່າ “ຄຳຮ້ອງຂໍຂອງພະນາງເປັນສິ່ງ
ໃດນັ້ນ ມັນຈະເປັນທີ່ໂຜດປະທານແກ່ນາງ ແລ້ວຄຳທູນຂໍຂອງພະນາງວ່າອັນໃດ ແມ່ນຈະເຖິງ
ເຄິ່ງລາຊະອານາ ຈັກຂອງເຮົາກໍຈະໃຫ້”

[7]ພະນາງ ເອສະເທີ ທູນວ່າ “ຄຳຮ້ອງຂໍຂອງຂ້ານ້ອຍແລະຄຳທູນຂໍຂອງຂ້ານ້ອຍ ຄື [8]ຖ້າຂ້າ-
ນ້ອຍເປັນທີ່ພໍພະໄທໃນສາຍພະເນດຂອງກະສັດ ແລະເປັນທີ່ພໍພະໄທກະສັດທີ່ຈະປະທານຕາມ
ຄຳຮ້ອງຂໍຂອງຂ້ານ້ອຍ ແລະໃຫ້ຄຳທູນຂໍຂອງຂ້ານ້ອຍສຳເລັດ ຂໍກະສັດສະເດັດມາທີ່ງານກິນ
ລ້ຽງຊຶ່ງຂ້ານ້ອຍ ຈັດຕຽມໄວ້ພ້ອມກັບ ຮາມານ ແລະມື້ອື່ນນີ້ຂ້ານ້ອຍຈະເຮັດຕາມທີ່ກະສັດກ່າວ
ນັ້ນ”

[9]ມື້ນັ້ນ ຮາມານ ກໍອອກໄປດ້ວຍໃຈຊື່ນບານ ແລະຍິນດີ ແຕ່ເມື່ອ ຮາມານ ເຫັນ ມໍເດກາຍ ຢູ່
ປະຕູຂອງກະສັດ ບໍ່ຢືນຂຶ້ນ ຫລືຕົວສັ່ນຢູ່ຕໍ່ໜ້າຕົນ ເພິ່ນກໍດ່າ ມໍເດກາຍ [10]ເຖິງຢ່າງນັ້ນກໍດີ
ຮາມານ ອົດກັ້ນໄວ້ ກັບໄປເຮືອນໃຊ້ໃຫ້ຄົນໄປຕາມບັນດາເພື່ອນຂອງຕົນ ແລະນາງ ເຊເຣັດ
ເມຍຂອງຕົນ [11]ຮາມານ ພັນລະນາເຖິງຄວາມຮຸ່ງເຮືອງງົດງາມແຫ່ງຄວາມຮັ່ງມີຂອງຕົນຈຳນວນ
ລູກຂອງຕົນ ແລະ ກຽດຕິຍົດທັງໝົດຊຶ່ງກະສັດປະທານແກ່ຕົນ ແລະເຖິງເລື່ອງວ່າກະສັດໄດ້
ເລື່ອນຕົນຂຶ້ນເໜືອເຈົ້ານາຍ ແລະຂ້າລາຊະການຂອງກະສັດຢ່າງໃດ [12]ແລ້ວ ຮາມານ ເສີມວ່າ
“ແມ່ນພະລາຊີນີ ເອສະເທີ ກໍບໍ່ໄດ້ໃຫ້ຜູ້ໃດໄປກັບກະສັດໃນງານກິນລ້ຽງ ຊຶ່ງພະນາງໄດ້ຈັດຂຶ້ນ
ນອກເໜືອຈາກຕົວຂ້ອຍ ແລະມື້ອື່ນນີ້ພະນາງໄດ້ເຊີນຂ້ອຍກັບກະສັດອີກ [13]ແຕ່ສິ່ງເຫລົ່ານີ້ບໍ່ໄດ້
ເປັນປະໂຫຍດແກ່ຂ້ອຍ ຕາບໃດທີ່ຂ້ອຍເຫັນ ມໍເດກາຍ ຊາວຢິວ ນັ່ງຢູ່ທີ່ປະຕູຂອງກະສັດ”

[14]ເຊເຣັດ ເມຍຂອງ ເພິ່ນ ແລະສະຫາຍທັງໝົດຂອງ ເພິ່ນຈຶ່ງ ເວົ້າກັບ ເພິ່ນວ່າ “ຂໍເຮັດບ່ອນ
ແຂວນຄໍສູງຫ້າ ສິບສອກ ຮຸ່ງເຊົ້າກໍທູນກະສັດໃຫ້ແຂວນ ມໍເດກາຍ ໃນບ່ອນນັ້ນ ແລະຈຶ່ງໄປກິນ
ລ້ຽງຢ່າງຊື່ນບານກັບກະສັດ” ຄຳແນະນຳນີ້ເປັນທີ່ພໍໃຈ ຮາມານ ເພິ່ນຈຶ່ງສັ່ງໃຫ້ເຮັດບ່ອນແຂວນ
ຄໍໄວ້

# ບົດທີ 6

## ຮາມານຕ້ອງຍົກຍ້ອງມໍເດກາຍ

[1]ຄືນມື້ນັ້ນ ກະສັດບັນທົມບໍ່ຫລັບ ແລະພະອົງສັ່ງໃຫ້ນຳໜັງສືບັນທຶກເຫດການທີ່ເປັນໜ້າຈົດ
ຈຳຄືໜັງສືຂ່າວ ຄາວມາ, ພວກເຂົາກໍອ່ານຖວາຍກະສັດ [2]ພະອົງໄດ້ຍິນຄຳທີ່ຂຽນໄວ້ວ່າ ມໍເດ-
ກາຍ ໄດ້ທູນເລື່ອງ ບິກທານາ ແລະ ເຕເຣັດ ຢ່າງໃດ ຄືເລື່ອງຊາຍຕອນ ສອງຄົນຂອງກະສັດຜູ້
ເຝົ້າທາງປະຕູ ຫາທາງທີ່ຈະຂ້າກະສັດ ເຊເຊັດ

[3]ກະສັດກ່າວວ່າ “ໄດ້ໃຫ້ກຽດ ແລະກຽດຕິຍົດຫຍັງແກ່ ມໍເດກາຍ ໃນການນີ້” ຂ້າລາຊະການ
ຂອງກະສັດຜູ້ບົວລະບັດພະອົງທູນຕອບວ່າ “ຍັງບໍ່ໄດ້ໃຫ້ສິ່ງໃດ”

[4]ກະສັດກ່າວວ່າ “ໃຜຢູ່ໃນເດີ່ນບ້ານ” ຝ່າຍ ຮາມານ ຫາກໍເຂົ້າມາເຖິງລານຊັ້ນນອກຂອງລາ-
ຊະວັງ ເພື່ອຈະທູນກະສັດເລື່ອງເອົາ ມໍເດກາຍ ແຂວນທີ່ບ່ອນແຂວນຄໍ ຊຶ່ງຕົນໄດ້ຕຽມໄວ້ສຳລັບ
ລາວ [5]ຂ້າລາຊະການຂອງກະສັດຈຶ່ງທູນກະສັດວ່າ “ເບິ່ງແມ ຮາມານ ກຳລັງຢືນຢູ່ໃນເດີ່ນ”

ແລະກະສັດກ່າວວ່າ "ໃຫ້ເພິ່ນເຂົ້າມານີ້"
6ຮາມານ ຈຶ່ງເຂົ້າມາ ກະສັດກ່າວກັບເພິ່ນວ່າ "ຫາກກະສັດມີພະປະສົງຈະປະທານກຽດຕິຍົດ
ແກ່ບຸກຄົນຜູ້ໃດ ແລ້ວກະສັດຄວນຈະເຮັດແກ່ຜູ້ນັ້ນປະການໃດ?" ຝ່າຍ ຮາມານ ເວົ້າໃນໃຈວ່າ
"ມີຜູ້ໃດບໍທີ່ກະສັດພໍພະໄທຈະປະ ທານກຽດຕິຍົດຫລາຍກວ່າຂ້ານ້ອຍ" 7ແລ້ວ ຮາມານ ຈຶ່ງທູນ
ກະສັດວ່າ "ເພື່ອໃຫ້ກຽດແກ່ຄົນທີ່ກະສັດພໍພະໄທຈະປະທານກຽດຕິຍົດໃຫ້ນັ້ນ 8ຂໍມອບເສື້ອຜ້າ
ຂອງພະອົງ ຊຶ່ງກະສັດນຸ່ງ ແລະມ້າຂອງກະສັດ ແລະມົງກຸດຊຶ່ງພະອົງໄດ້ສວມເທິງພະສຽນ;
9ຂໍໄດ້ມອບເສື້ອຜ້າຂອງພະອົງ ແລະມ້າໃນມືຂອງເຈົ້ານາຍຜູ້ໃຫຍ່ທີ່ສຸດຄົນໜຶ່ງຂອງກະສັດ, ຂໍ
ໃຫ້ຕົບແຕ່ງຄົນທີ່ກະສັດພໍພະໄທຈະປະທານກຽດຕິຍົດໃຫ້ ແລະຂໍໃຫ້ຊາຍຄົນນັ້ນຂຶ້ນນັ່ງຫລັງມ້າ
ໄປຕາມຖະໜົນຂອງເມືອງ ແລະເວົ້າໄປຂ້າງໜ້າລາວວ່າ 'ຜູ້ທີ່ກະສັດພໍພະໄທຈະປະທານກຽດ-
ຕິຍົດກໍເປັນເຊັ່ນນີ້ແຫລະ'"
10ກະສັດຈຶ່ງກ່າວກັບ ຮາມານ ວ່າ "ຈົ່ງຮີບເອົາເສື້ອ ແລະມ້າຢ່າງທີ່ທ່ານເວົ້າ ແລ້ວໃຫ້ກຽດແກ່
ມໍເດກາຍ ຊາວຢິວ ຊຶ່ງນັ່ງຢູ່ທີ່ປະຕູຂອງກະສັດ ຢ່າເວັ້ນສິ່ງໃດທີ່ທ່ານກ່າວມານັ້ນເລີຍ"
11ຮາມານ ຈຶ່ງນຳເສື້ອຜ້າຂອງພະອົງກັບມ້າ ແລະຕົບແຕ່ງ ມໍເດກາຍ ແລະໃຫ້ລາວຂຶ້ນມ້າໄປ
ຕາມຖະໜົນໃນ ເມືອງ ແລະ ເວົ້າຕໍ່ໜ້າລາວວ່າ "ຜູ້ທີ່ກະສັດພໍພະໄທຈະປະທານກຽດຕິຍົດກໍເປັນ
ເຊັ່ນນີ້ແຫລະ"
12ແລ້ວ ມໍເດກາຍ ກໍກັບມາທີ່ປະຕູຂອງກະສັດ ແຕ່ ຮາມານ ຟ້າວກັບໄປເຮືອນຂອງຕົນ ເອົາ
ຜ້າປົກຫົວ ແລະມີຄວາມທຸກໃຈຫລາຍ 13ຮາມານ ເລົ່າທຸກສິ່ງທີ່ບັງເກີດແກ່ຕົນໃຫ້ ເຊເຣັດ ເມຍ
ຂອງເພິ່ນ ແລະສະຫາຍທັງຫລາຍຟັງ, ຄົນສະຫລາດຂອງເພິ່ນ ແລະ ເຊເຣັດ ເມຍຂອງເພິ່ນຈຶ່ງ
ເວົ້າວ່າ "ຖ້າເຈົ້າເລີ່ມລົ້ມລົງຕໍ່ໜ້າ ມໍເດກາຍ ຊຶ່ງເປັນເຊື້ອສາຍຂອງຊາວຢິວ ເຈົ້າຈະຊະນະບໍ່
ໄດ້ ແຕ່ຈະລົ້ມລົງຕໍ່ໜ້າລາວແນ່ນອນ"
14ຂະນະທີ່ພວກເຂົາກຳລັງເວົ້າກັບເພິ່ນຢູ່ ຊາຍຕອນຂອງກະສັດກໍມາເຖິງ ຟ້າວນຳຮາມານ
ໄປໃນງານກິນ ລ້ຽງ ຊຶ່ງພະນາງ ເອສະເທີ ໄດ້ຈັດນັ້ນ

# ບົດທີ 7

## ການກິນລ້ຽງຂອງພະລາຊີນີເອສະເທີ

1ກະສັດຈຶ່ງສະເດັດກັບ ຮາມານ ໄປຮ່ວມໃນງານກິນລ້ຽງກັບພະລາຊີນີ ເອສະເທີ 2ເມື່ອກຳລັງ
ດື່ມເຫລົ້າອະງຸ່ນໃນວັນທີສອງຢູ່ນັ້ນ ກະສັດໄດ້ກ່າວກັບ ເອສະເທີ ອີກວ່າ "ມະເຫສີ ເອສະເທີ ຄຳ
ຮ້ອງຂໍຂອງພະນາງຄືຫຍັງ? ແລະຄຳທູນຂໍຂອງພະນາງຄືຫຍັງ ເຮົາຈະປະທານໃຫ້ ແມ່ນເຖິງ
ເຄິ່ງລາຊະອານາຈັກຂອງເຮົາກໍຈະໃຫ້ໄດ້"
3ມະເຫສີ ເອສະເທີ ທູນຕອບວ່າ "ຂ້າແດ່ກະສັດ ຖ້າຂ້ານ້ອຍເປັນທີ່ພໍພະໄທໃນສາຍພະເນດ
ຂອງພະອົງ ແລະຖ້າເປັນທີ່ພໍພະໄທກະສັດໃນຄຳທູນຂໍຂອງຂ້ານ້ອຍຄື ຂໍໂຜດຊີວິດຂອງຂ້າ-
ນ້ອຍ ແລະຊີວິດຂອງຊົນຊາດຂອງຂ້ານ້ອຍຕາມຄຳອ້ອນວອນຂອງຂ້ານ້ອຍເທີນ 4ເພາະພວກຜູ້
ຂ້າຖືກຂາຍ ທັງຂ້ານ້ອຍ ແລະຊົນຊາດຂອງຂ້ານ້ອຍ ໃຫ້ຖືກທຳລາຍ, ຖືກສັງຫານ ແລະໃຫ້

ຖືກ ລ້າງຜານ; ຖ້າພວກຜູ້ຂ້າຖືກຂາຍໃຫ້ເປັນຂ້າທາດຊາຍແລະຍິງ ຂ້ານ້ອຍກໍຈະອົດກັ້ນສະ-
ຫງົບໄວ້ ເພາະຄວາມທຸກຍາກຂອງພວກຂ້ານ້ອຍຈະປຽບກັບຜົນເສຍຫາຍຂອງກະສັດນັ້ນກໍບໍ່
ໄດ້”

5ກະສັດ ເຊເຊັດ ຈຶ່ງກ່າວກັບມະເຫສີ ເອສະເທີ ວ່າ (ຜູ້ທີ່ມີໃຈເຕັມດ້ວຍຄວາມຄິດເຮັດຢ່າງນັ້ນ
ແມ່ນຜູ້ໃດ ແລະຢູ່ໃສ) “ຜູ້ນັ້ນຄືໃຜ? ຢູ່ໃສ? ຈຶ່ງບັງອາດຄິດເຮັດການເຊັ່ນນີ້”

6ແລະພະນາງ ເອສະເທີ ທູນຕອບວ່າ “ຄູ່ສັດຕູຄື ຮາມານ ຄົນໂຫດຮ້າຍຜູ້ນີ້” ຮາມານກໍສະ-
ດຸ້ງຕົກໃຈຢ້ານຢູ່ຕໍ່ໜ້າກະສັດ ແລະມະເຫສີ

### ຮາມານຖືກແຂວນຄໍ

7ກະສັດໄດ້ລຸກຂຶ້ນຈາກການກິນລ້ຽງດ້ວຍຄວາມຢາກຮ້າຍ ແລ້ວສະເດັດເຂົ້າໄປໃນລາຊະອຸ
ທະຍານ ແຕ່ຮາມານຍັງຢູ່ ເພື່ອທູນຂໍຊີວິດຈາກພະລາຊິນີ ເອສະເທີ ເພາະຕົນເຫັນວ່າ ກະສັດ
ໄດ້ມຸ້ງຮ້າຍຕໍ່ຕົນແລ້ວ

8ເມື່ອກະສັດສະເດັດກັບຈາກລາຊະອຸທະຍານມາຍັງບ່ອນຊຶ່ງມີການກິນລ້ຽງ ຝ່າຍຮາມານຍັງ
ກາບຢູ່ທີ່ແທ່ນ ຊຶ່ງພະນາງ ເອສະເທີປະທັບຢູ່ນັ້ນ ກະສັດກ່າວວ່າ “ລາວຍັງຈະຂົ່ມຂືນພະລາຊິນີ
ຕໍ່ໜ້າຕໍ່ຕາເຮົາໃນເຮືອນຂອງເຮົາ ບໍ?” ພໍຄຳເວົ້າຫລຸດອອກຈາກພະໂອດກະສັດ, ພວກເຂົາກໍ
ເອົາຜ້າມາປົກໜ້າຂອງຮາມານ 9ຮາໂບນາ ຊາຍຕອນຄົນໜຶ່ງທູນຕໍ່ພະພັກກະສັດວ່າ “ເບິ່ງແມ
ບ່ອນແຂວນຄໍຊຶ່ງຮາມານຕຽມໄວ້ສຳລັບ ມໍເດກາຍ ຜູ້ທີ່ໄດ້ຊ່ວຍຊີວິດຂອງກະສັດ ກໍຍັງຕັ້ງຢູ່ທີ່
ເຮືອນຂອງຮາມານ ສູງຫ້າສິບສອກ” ກະສັດກ່າວວ່າ “ແຂວນ ມັນໄວ້ເທິງນັ້ນແຫລະ” 10ພວກ
ເຂົາກໍແຂວນຮາມານ ເທິງບ່ອນແຂວນຄໍ ຊຶ່ງເພິ່ນໄດ້ຕຽມໄວ້ສຳລັບ ມໍເດກາຍ ແລ້ວຄວາມຮ້າຍ
ຂອງກະສັດກໍສະຫງົບລົງ

# ບົດທີ 8

## ພວກຢິວຮັບອະນຸຍາດແກ້ແຄ້ນສັດຕູທັງຫລາຍຂອງພວກເຂົາ

1ໃນມື້ນັ້ນ ກະສັດ ເຊເຊັດ ໄດ້ມອບຄອບຄົວຂອງຮາມານ ສັດຕູຂອງຊາວຢິວ ແກ່ມະເຫສີ ເອ-
ສະເທີ ຝ່າຍ ມໍເດກາຍ ກໍໄດ້ເຂົ້າເຝົ້າກະສັດ ເພາະພະນາງ ເອສະເທີ ໄດ້ທູນບອກວ່າເພິ່ນເປັນ
ຫຍັງກັບພະນາງ 2ກະສັດຈຶ່ງຖອດແຫວນກາ ຊຶ່ງພະອົງໄດ້ເອົາມາຈາກຮາມານ ມອບໃຫ້ມໍເດ-
ກາຍ ພະນາງ ເອສະເທີກໍໄດ້ຕັ້ງ ມໍເດກາຍ ເປັນໃຫຍ່ເໜືອຄອບຄົວຂອງຮາມານ

3ແລ້ວພະນາງ ເອສະເທີ ໄດ້ກາບທູນຕໍ່ກະສັດອີກ ໂດຍກາບຫົວລົງທີ່ຕີນຂອງພະອົງ ແລະ
ອ້ອນວອນພະອົງດ້ວຍນ້ຳຕາ ຂໍໃຫ້ຊົງຍົກເລີກແຜນການຊົ່ວຮ້າຍທີ່ຮາມານ ຄົນອັກອາກ ໄດ້
ຄິດປອງຮ້າຍ ເພື່ອທຳລາຍພວກຢິວນັ້ນ 4ກະສັດຈຶ່ງໄດ້ຍື່ນໄມ້ເທົ້າຄຳແກ່ພະນາງ ເອສະເທີ,
ພະນາງ ເອສະເທີກໍໄດ້ລຸກຂຶ້ນ ແລະຢືນເຝົ້າກະສັດ

5ພະນາງທູນວ່າ “ຖ້າເປັນທີ່ພໍພະໄທກະສັດ ແລະຖ້າຂ້ານ້ອຍເປັນທີ່ພໍພະໄທໃນສາຍພະເນດ
ຂອງທ່ານ ຖ້າສິ່ງນັ້ນເປັນສິ່ງທີ່ຖືກຕ້ອງຕໍ່ພະພັກກະສັດ ແລະຂ້ານ້ອຍເປັນທີ່ພໍພະໄທໃນສາຍ
ພະເນດຂອງພະອົງ ຂໍໃຫ້ມີຈົດໝາຍ ເພື່ອຍົກເລີກບັນດາຈົດໝາຍທີ່ຮາມານ ຄົນອັກອາກ

ລູກຊາຍ ຮຳເມດາທາ ໄດ້ຄິດຂຶ້ນ ແລະຂຽນ ເພື່ອທຳລາຍພວກຢິວທີ່ຢູ່ໃນແຂວງທັງໝົດຂອງ
ກະສັດ 6ເພາະຂ້ານ້ອຍຈະອົດທົນເບິ່ງໄພພິບັດທີ່ຈະມາເຖິງຊົນຊາດຂອງຂ້ານ້ອຍໄດ້ຢ່າງໃດ?
ຂ້ານ້ອຍຈະທົນເບິ່ງ ການທຳລາຍຍາດພີ່ນ້ອງຂອງຂ້ານ້ອຍໄດ້ຢ່າງໃດ?”

7ກະສັດ ເຊເຊັດ ຈຶ່ງກ່າວກັບພະລາຊິນີ ເອສະເທີ ແລະແກ່ ມໍເດກາຍ ຊາວຢິວ ວ່າ “ເບິ່ງແມ
ເຮົາມອບຄອບຄົວ ຂອງຮາມານ ແກ່ພະນາງ ເອສະເທີ ແລ້ວ ແລະພວກເຂົາກໍໄດ້ແຂວນລາວໄວ້
ເທິງບ່ອນແຂວນຄໍ ຍ້ອນລາວຈະເຮັດອັນຕະລາຍແກ່ພວກຢິວ 8ເຫດສະນັ້ນ ທ່ານທັງສອງຈົ່ງ
ຂຽນໜັງສືກ່ຽວກັບຊາວຢິວຕາມພວກທ່ານເຫັນດີໃນນາມຂອງກະສັດ ແລະ ປະທັບຕາດ້ວຍ
ແຫວນ ເພາະວ່າໜັງສືທີ່ຂຽນໃນນາມຂອງກະສັດ ແລະປະທັບຕາດ້ວຍແຫວນຈະຍົກເລີກບໍ່ໄດ້”

9ແລ້ວພະອົງໄດ້ເອີ້ນເລຂາເຂົ້າມາໃນເວລານັ້ນ, ໃນເດືອນທີສາມ ຊຶ່ງເປັນເດືອນສີວານກົງ
ກັບວັນທີຊາວສາມ ແລະໃຫ້ຂຽນດຳລັດຕາມທີ່ມໍເດກາຍບັນຊາທຸກຢ່າງກ່ຽວກັບພວກຢິວ ເຖິງ
ບັນດາຜູ້ປົກຄອງແຂວງ ແລະຜູ້ປົກຄອງເມືອງ ເຈົ້າໜ້າທີ່ຂອງແຂວງຕັ້ງແຕ່ອິນເດຍເຖິງເອທິ-
ໂອເປຍ ຮ້ອຍຊາວເຈັດແຂວງໄປເຖິງທຸກແຂວງ ເປັນອັກສອນຂອງແຂວງນັ້ນ ແລະເຖິງປະ-
ຊາຊົນທຸກຊາດເປັນພາສາຂອງພວກເຂົາ ແລະເຖິງພວກຢິວເປັນ ອັກສອນ ແລະພາສາຂອງ
ພວກເຂົາ 10ເພິ່ນຂຽນໃນນາມຂອງກະສັດເຊເຊັດ ແລະປະທັບຕາດ້ວຍແຫວນຂອງກະສັດ
ແລະສົ່ງຈົດໝາຍນັ້ນໄປທາງບັນດາຜູ້ສົ່ງຂ່າວຄື ຜູ້ຂີ່ມ້າໄວ, ຜູ້ຂີ່ລໍ, ອູດ ແລະມ້າໜຸ່ມຂອງກະ-
ສັດ

11ໃນຈົດໝາຍເຫລົ່ານີ້ກະສັດໄດ້ອະນຸຍາດໃຫ້ພວກຢິວຜູ້ຢູ່ໃນທຸກເມືອງຊຸມນຸມກັນ ແລະ
ປ້ອງກັນຊີວິດຂອງຕົນ ໃຫ້ທຳລາຍ ໃຫ້ສັງຫານ ແລະໃຫ້ລ້າງຜານກຳລັງພົນໃດໆຂອງປະຊາ-
ຊົນ ຫລືແຂວງໃດໆທີ່ຈະມາທຳລາຍ ລູກເມຍຂອງຕົນ ແລະປຸ້ນຊັບສົມບັດຂອງຕົນ 12ໃນມື້
ດຽວ ທົ່ວທຸກແຂວງຂອງກະສັດເຊເຊັດ ຄືວັນທີສິບສາມເດືອນທີສິບສອງ ຊຶ່ງເປັນເດືອນອັດດາ
13ສຳເນົາຂອງໜັງສືທີ່ຂຽນນັ້ນຈະຕ້ອງເປັນດຳລັດປະກາດໃນທຸກແຂວງ (ໃຫ້ປວງຊົນທັງປວງ
ຮັບຮູ້) ແລະອອກໂດຍການປ່າວປະກາດເຖິງຊົນຊາດທັງປວງ ເພື່ອພວກຢິວຈະຕ້ອງພ້ອມກັນ
ໃນມື້ນັ້ນ ແລະແກ້ແຄ້ນຕໍ່ສັດຕູຂອງພວກເຂົາ

14ຄົນສົ່ງຂ່າວ ຊຶ່ງຂີ່ລໍກັບອູດຈຶ່ງຮີບຟ້າວໄປຕາມຄຳສັ່ງຂອງກະສັດ ແລະພວກເຂົາໄດ້ປະ-
ກາດດຳລັດນັ້ນທີ່ວນະຄອນຊູຊາ

15ເມື່ອ ມໍເດກາຍ ອອກໄປຈາກພະພັກກະສັດ ນຸ່ງເສື້ອຜ້າຂອງເພິ່ນສີຟ້າ ແລະສີຂາວ ພ້ອມ
ກັບມົງກຸດຄຳໃຫຍ່ ແລະເສື້ອຄຸມຜ້າປ່ານເນື້ອລະອຽດສີມ່ວງ ຝ່າຍຊາວເມືອງຊູຊາກໍໂຫ່ຮ້ອງ
ຊົມຊື່ນຍິນດີ 16ຊາວຢິວມີສັນຕິພາບ, ຄວາມຍິນດີມ່ວນຊື່ນ ແລະມີກຽດ 17ທຸກແຂວງທຸກເມືອງ
ບໍ່ວ່າຢູ່ບ່ອນໃດທີ່ຄຳສັ່ງຂອງກະສັດແລະດຳລັດຂອງເພິ່ນມາເຖິງ ກໍມີຄວາມຍິນດີ ແລະຄວາມ
ຊື່ນບານທ່າມກາງພວກຢິວ ມີການກິນລ້ຽງ ແລະມ່ວນຊື່ນ ຄົນເປັນຈຳນວນຫລາຍທີ່ມາຈາກ
ຊົນຊາດອື່ນກໍປະກາດຕົວເປັນພວກຢິວ ເພາະພວກເຂົາຢ້ານກົວພວກຢິວ

# ບົດທີ 9

## ພວກຢິວປ້ອງກັນຕົນເອງໄດ້

1ໃນເດືອນທີສິບສອງຊຶ່ງເປັນເດືອນອັດດາ ວັນທີສິບສາມໃນເດືອນນັ້ນ ເມື່ອຈະປະຕິບັດ
ຕາມຄຳສັ່ງຂອງ ກະສັດ ແລະດຳລັດ, ໃນມື້ນັ້ນເອງທີ່ສັດຕູຂອງພວກຢິວຫວັງຈະເປັນໃຫຍ່
ເໜືອພວກຢິວ (ແຕ່ການນັ້ນໄດ້ຖືກປ່ຽນໄປເປັນມື້ທີ່ພວກຢິວໄດ້ຮັບຄວາມເປັນໃຫຍ່ເໜືອພວກທີ່
ກຽດຊັງພວກເຂົາ) 2ພວກຢິວໄດ້ເຕົ້າໂຮມກັນຢູ່ຕາມບັນດາຫົວເມືອງຂອງພວກເຂົາໃນທົ່ວທຸກ
ແຂວງຂອງກະສັດເຊເຊັດ ເພື່ອຈະຂ້າພວກທີ່ຊອກຫາທາງເຮັດຮ້າຍຕໍ່ພວກເຂົາ ແລະ ບໍ່ມີຜູ້ໃດ
ຕໍ່ຕ້ານພວກເຂົາໄດ້ ຍ້ອນປະຊາຊາດທັງປວງຢ້ານພວກຢິວ 3ບັນດາເຈົ້ານາຍທັງປວງຂອງ
ແຂວງ, ຜູ້ປົກຄອງແຂວງແລະຜູ້ປົກຄອງເມືອງ ແລະເຈົ້າໜ້າທີ່ລາຊະການ ກໍໄດ້ຊ່ວຍພວກຢິວ
ດ້ວຍ ເພາະພວກເຂົາມີຄວາມຢ້ານກົວຕໍ່ມໍເດກາຍ 4ເຫດວ່າມໍເດກາຍເປັນໃຫຍ່ຢູ່ໃນລາຊະວັງ
ຂອງກະສັດ ແລະຊື່ສຽງຂອງເພິ່ນກໍຊ່າລືໄປທົ່ວທຸກແຂວງ ແລະມໍເດກາຍກໍມີອຳນາດເພີ່ມຂຶ້ນ
ເລື້ອຍໆ

5ພວກຢິວຈຶ່ງໂຈມຕີສັດຕູທັງໝົດຂອງຕົນດ້ວຍດາບ ຂ້າ ແລະທຳລາຍພວກເຂົາ ແລະເຮັດ
ແກ່ຜູ້ທີ່ກຽດຊັງພວກເຂົາຕາມໃຈຊອບ 6ໃນນະຄອນຊູຊາພວກຢິວໄດ້ຂ້າ ແລະທຳລາຍລ້າງຫ້າ
ຮ້ອຍຄົນ 7ໄດ້ຂ້າ ປາຊານດາທາ ແລະດານໂຟນ ແລະອັດສະປາທາ 8ໂປຣາທາ ອາດາເລຍ
ແລະອາຣິດາທາ 9ແລະປາມາຊະຕາ ອາຣິສາຍ ອາຣິດາຍ ແລະວາເຢຊາທາ 10ລູກຊາຍທັງ
ສິບຂອງຮາມານ ລູກຊາຍຮຳເມດາທາສັດຕູຂອງພວກຢິວ ແຕ່ພວກເຂົາບໍ່ໄດ້ປຸ້ນເອົາສິ່ງຂອງ
ໃດໆ

11ໃນມື້ນັ້ນຈຳນວນຄົນທີ່ຖືກຂ້າໃນນະຄອນຊູຊາກໍຖືກນຳມາສະເໜີຕໍ່ກະສັດ 12ກະສັດຈຶ່ງ
ກ່າວກັບມະເຫສີເອສະເທີວ່າ "ພວກຢິວໄດ້ຂ້າແລະທຳລາຍລ້າງຫ້າຮ້ອຍຄົນໃນນະຄອນຊູຊາ
ລວມທັງລູກຊາຍທັງສິບຄົນຂອງຮາມານດ້ວຍ ໃນແຂວງຂອງກະສັດທີ່ເຫລືອຢູ່ນັ້ນ ພວກເຂົາ
ຈະເຮັດສິ່ງໃດ ບັດນີ້ຄຳຮ້ອງຂອງພະນາງຄືຫຍັງ ເຮົາຈະປະທານໃຫ້, ຄຳທູນຂໍຂອງພະນາງຕໍ່
ໄປມີຫຍັງອີກ ເຮົາກໍຈະເຮັດໃຫ້ສຳເລັດ"

13ພະນາງເອສະເທີທູນວ່າ "ຖ້າເປັນທີ່ພໍພະໄທກະສັດ ຂໍໃຫ້ພວກຢິວທີ່ຢູ່ໃນນະຄອນຊູຊາ
ໄດ້ເຮັດຕາມດຳລັດຂອງມື້ນີ້ໃນມື້ອື່ນອີກ ແລະຂໍໃຫ້ແຂວນຄໍລູກຊາຍທັງສິບຄົນຂອງຮາມານ
ເທິງບ່ອນແຂວນຄໍ"

14ກະສັດໄດ້ບັນຊາໃຫ້ເຮັດເຊັ່ນນັ້ນ ມີດຳລັດອອກໃນນະຄອນຊູຊາ ແລະລູກຊາຍທັງສິບຄົນ
ຂອງຮາມານກໍ ຖືກແຂວນຄໍ 15ແລະພວກຢິວທີ່ຢູ່ໃນນະຄອນຊູຊາກໍໄດ້ໂຮມກັນອີກໃນວັນທີ
ສິບສີ່ເດືອນອັດດາ ແລະໄດ້ຂ້າສາມຮ້ອຍຄົນໃນນະຄອນຊູຊາ ແຕ່ພວກເຂົາບໍ່ໄດ້ຍຶດເອົາສິ່ງ
ຂອງ

16ຝ່າຍພວກຢິວອື່ນໆຊຶ່ງຢູ່ໃນແຂວງຂອງກະສັດກໍເຕົ້າໂຮມກັນປ້ອງກັນຊີວິດ ແລະຫລຸດພົ້ນ
ຈາກສັດຕູ ຂອງພວກເຂົາ, ພວກເຂົາຂ້າຜູ້ທີ່ກຽດຊັງພວກເຂົາເຈັດໝື່ນຫ້າພັນຄົນ ແຕ່ພວກເຂົາ
ບໍ່ໄດ້ຍຶດເອົາສິ່ງຂອງໃດໆ 17ເຫດການນີ້ເກີດຂຶ້ນໃນວັນທີສິບສາມເດືອນອັດດາ ແລະໃນວັນທີ

ສິບສີ່ ພວກເຂົາໄດ້ຢຸດເຊົາ ແລະເຮັດມື້ນັ້ນໃຫ້ເປັນງານກິນລ້ຽງ ແລະຍິນດີ
[18]ແຕ່ພວກຢິວທີ່ຢູ່ໃນນະຄອນຊູຊາກໍເຕົ້າໂຮມກັນໃນວັນທີສິບສາມແລະວັນທີສິບສີ່ ແລະຢຸດ
ພັກໃນວັນທີ ສິບຫ້າເຮັດໃຫ້ວັນນັ້ນເປັນວັນກິນລ້ຽງແລະຍິນດີ [19]ເພາະສະນັ້ນ ພວກຢິວໃນຊົນ-
ນະບົດ, ຢູ່ຕາມຫົວເມືອງທີ່ບໍ່ມີກຳແພງ ຖືວັນທີສິບສີ່ຂອງເດືອນອາດາ ເປັນວັນແຫ່ງຄວາມ
ຍິນດີ ແລະການກິນລ້ຽງ ແລະຖືເປັນມື້ແຫ່ງຄວາມມ່ວນຊື່ນ ເປັນມື້ທີ່ພວກເຂົາສົ່ງຂອງຂວັນໄປ
ໃຫ້ກັນແລະກັນ

## ການເລີ່ມຕົ້ນຂອງເທດສະການປູຣິມ

[20]ມໍເດກາຍ ໄດ້ບັນທຶກເລື່ອງນີ້ ແລະສົ່ງຈົດໝາຍໄປຫາພວກຢິວທັງປວງຜູ້ທີ່ຢູ່ໃນບັນດາ
ແຂວງຂອງ ກະສັດເຊເຊັດທັງໃກ້ ແລະໄກ [21]ສັ່ງໃຫ້ພວກເຂົາຖືວັນທີສິບສີ່ເດືອນອາດາ ແລະ
ວັນທີສິບຫ້າໃນເດືອນດຽວກັນໃນທຸກໆປີ [22]ເປັນມື້ທີ່ພວກຢິວພົ້ນຈາກສັດຕູຂອງພວກເຂົາ ແລະ
ເປັນເດືອນທີ່ປ່ຽນຄວາມໂສກເສົ້າເປັນຄວາມຍິນດີ ການຮ້ອງຄາງເປັນມື້ທີ່ມ່ວນຊື່ນໃຫ້ແກ່ພວກ
ເຂົາ ແລະໃຫ້ພວກເຂົາຖືເປັນມື້ກິນລ້ຽງ ແລະຍິນດີ ເປັນມື້ທີ່ສົ່ງຂອງຂວັນໃຫ້ແກ່ກັນແລະກັນ
ແລະໃຫ້ຂອງຂວັນແກ່ຄົນຍາກຈົນ
[23]ພວກຢິວຈຶ່ງຕົກລົງເຮັດຕາມທີ່ພວກເຂົາໄດ້ລົງມືເຮັດແລ້ວ ແລະຕາມທີ່ມໍເດກາຍໄດ້ຂຽນ
ໄປເຖິງພວກເຂົາ [24]ເພາະຮາມານລູກຊາຍຮຳເມດາທາ ຄົນອາກອາກສັດຕູຂອງພວກຢິວທັງ
ປວງທີ່ໄດ້ປອງຮ້າຍພວກຢິວ ເພື່ອທຳລາຍພວກເຂົາ ໂດຍຈັບປູຣິມ ຄືສະຫລາກ ເພື່ອລ້າງ-
ຜານ ແລະທຳລາຍພວກເຂົາ [25]ແຕ່ເມື່ອພະນາງເອສະເທີເຂົ້າເຝົ້າກະສັດ ພະອົງໄດ້ອອກຄຳ
ສັ່ງເປັນລາຍລັກອັກສອນໃຫ້ແຜນການຮ້າຍຂອງລາວ ຊຶ່ງລາວໄດ້ຄິດຕໍ່ພວກຢິວນັ້ນ ກັບຄືນຕົກ
ໃສ່ເທິງຫົວຂອງລາວເອງ ແລະໃຫ້ຕົວລາວກັບລູກຊາຍຂອງລາວຖືກແຂວນເທິງບ່ອນແຂວນຄໍ
ນັ້ນ [26]ເພາະສະນັ້ນ ພວກເຂົາຈຶ່ງເອີ້ນມື້ເຫລົ່ານີ້ວ່າ ປູຣິມ ຕາມຊື່ຄຳປູຣິມ ເພາະທຸກຢ່າງທີ່
ຂຽນໄວ້ໃນຈົດໝາຍນີ້ ແລະເພາະສິ່ງທີ່ພວກຢິວຕ້ອງປະເຊີນໃນເລື່ອງນີ້ ແລະສິ່ງທີ່ເກີດຂຶ້ນແກ່
ພວກເຂົາ [27]ພວກຢິວກໍກຳນົດ ແລະຍອມຮັບວ່າຕົວພວກເຂົາເອງ, ເຊື້ອສາຍຂອງພວກເຂົາ
ແລະບັນດາຜູ້ທີ່ເຂົ້າດ້ວຍກັນກັບພວກເຂົາຈະບໍ່ລືມຖືສອງມື້ນີ້ໃນທຸກໆປີຕາມຄຳສັ່ງທີ່ຂຽນໄວ້
ແລະຕາມເວລາທີ່ກຳນົດໄວ້ທຸກປີບໍ່ໄດ້ຂາດ [28]ພວກເຂົາຈະຈົດຈຳມື້ທັງສອງນີ້ ແລະຈະຖືຕະ-
ຫລອດທຸກຊົ່ວອາຍຸ, ທຸກຄອບຄົວ, ທຸກເມືອງ ແລະແຂວງ ພວກເຂົາຈະບໍ່ລືມວັນເທດສະການ
ປູຣິມນີ້ ຫລືການລະນຶກເຖິງມື້ເຫລົ່ານີ້ຈະບໍ່ໝົດລົງໃນເຊື້ອສາຍຂອງພວກເຂົາເລີຍ
[29]ແລ້ວມະເຫສີເອສະເທີ ລູກສາວຂອງອາບີຮາຍກັບມໍເດກາຍຄົນຢິວ ກໍຂຽນເປັນລາຍລັກ
ອັກສອນຮັບຮອງ ຈົດໝາຍສະບັບທີສອງໃນເລື່ອງເທດສະການປູຣິມ [30]ແລະໄດ້ສົ່ງຈົດໝາຍ
ໄປເຖິງຊາວຢິວທັງໝົດ, ເຖິງໜຶ່ງຮ້ອຍຊາວເຈັດແຂວງໃນລາຊະອານາຈັກຂອງເຊເຊັດເປັນ
ຖ້ອຍຄຳແຫ່ງສັນຕິສຸກ ແລະຄວາມຈິງ [31]ໃຫ້ຖືວັນເທດສະການປູຣິມຕາມກຳນົດໄວ້ ດັ່ງທີ່ມໍ-
ເດກາຍຄົນຢິວ ແລະມະເຫສີເອສະເທີໄດ້ຕັ້ງໄວ້ສຳລັບພວກເຂົາແລະຕາມທີ່ພວກເຂົາຕັ້ງໄວ້
ສຳລັບຕົນເອງແລະສຳລັບເຊື້ອສາຍຂອງພວກເຂົາ ກ່ຽວກັບການອົດອາຫານ ກັບການຮ້ອງທຸກ
ຂອງພວກເຂົາ [32]ຄຳສັ່ງຂອງພະນາງເອສະເທີຕັ້ງລະບຽບການເທດສະການປູຣິມໄວ້ ແລະຖືກ

ບັນທຶກໄວ້ໃນໜັງສືນັ້ນ

# ບົດທີ 10

## ນໍເດກາຍໄດ້ຮັບຕຳແໜ່ງຮອງກະສັດ

[1]ກະສັດ ເຊເຊັດ ໄດ້ອອກຄຳສັ່ງໃຫ້ເກັບພາສີທົ່ວລາຊະອານາຈັກ ແລະຕາມເກາະຕ່າງໆຢູ່ທີ່
ນ້ຳທະເລ [2]ລາດຊະກິດທັງໝົດເລື່ອງອຳນາດ ແລະກຳລັງຂອງກະສັດ ການປະກາດຍົດສັກອັນ
ສູງຂອງ ນໍເດກາຍ ຊຶ່ງກະສັດໄດ້ເລື່ອນຕຳແໜ່ງເພິ່ນຂຶ້ນ ໄດ້ບັນທຶກໄວ້ໃນໜັງສືຂ່າວຄາວຂອງ
ກະສັດ ແຫ່ງ ເມເດຍ ແລະ ເປີເຊຍ [3]ເພາະ ນໍເດກາຍ ຄົນ ຢິວ ມີຕຳແໜ່ງຮອງກະສັດ ເຊເຊັດ
ແລະເປັນໃຫຍ່ທ່າມກາງພວກຢິວ ເປັນທີ່ຊອບຂອງຍາດພີ່ນ້ອງຂອງເພິ່ນ ເພາະເພິ່ນສະແຫວງ-
ຫາຄວາມຮັ່ງມີໃຫ້ຊົນຊາດຂອງເພິ່ນ ແລະເວົ້າເພື່ອໃຫ້ເກີດສັນຕິສຸກແກ່ເຊື້ອສາຍທັງປວງຂອງ
ຕົນ

* * *

# ໂຢບ

## ບົດທີ 1

### ພະຍາມານທົດລອງໂຢບ

[1]ໃນປະເທດອູເຊ ມີຊາຍຄົນໜຶ່ງຊື່ໂຢບ ເປັນຄົນສັດຊື່ ແລະຂາບໄຫວ້ພຣະເຈົ້າ ລາວເປັນ
ຄົນດີບໍ່ເຮັດສິ່ງຊົ່ວຮ້າຍ. [2]ໂຢບມີລູກຊາຍເຈັດຄົນ ແລະລູກສາວສາມຄົນ. [3]ລາວມີແກະເຈັດພັນ
ໂຕ ອູດສາມພັນໂຕ ງົວກຽນຫ້າຮ້ອຍຄັນ ແລະລໍແມ່ຫ້າຮ້ອຍໂຕ ມີຂ້ອຍໃຊ້ຈຳນວນຫລວງ-
ຫລາຍ ລາວເປັນຄົນຮັ່ງມີທີ່ສຸດ ໃນບັນດາຊາວຕາເວັນອອກ.

[4]ພວກລູກຊາຍຂອງໂຢບເຄີຍຈັດງານກິນລ້ຽງຂຶ້ນ ຕາມຜຽນທີ່ໄດ້ຕົກລົງກັນໄວ້ ພວກເຂົາໄດ້
ເຊີນນ້ອງສາວທັງສາມຂອງຕົນມາຮ່ວມນຳ. [5]ພາຍຫລັງມື້ຈັດງານກິນລ້ຽງແຕ່ລະເທື່ອສິ້ນສຸດລົງ
ໂຢບຕ້ອງຕື່ນແຕ່ເຊົ້າ ແລະຖວາຍເຄື່ອງເຜົາບູຊາ ເພື່ອໃຫ້ລູກຂອງລາວມີຄວາມບໍລິສຸດ ລາວ
ໄດ້ເຮັດດັ່ງນີ້ຢູ່ສະເໝີ ເພາະລາວຄິດວ່າ ລູກຂອງລາວແຕ່ລະຄົນອາດຈະເຮັດບາບດ້ວຍການ
ປະໝາດພຣະເຈົ້າຢ່າງບໍ່ຮູ້ສຶກຕົວ.

[6]ຢູ່ມາມື້ໜຶ່ງ ມີຄະນະທູດຂອງພຣະຜູ້ເປັນເຈົ້າ ໄດ້ມາສູ່ພຣະພັກຂອງພຣະອົງ ພະຍາມານກໍ
ໄດ້ມານຳ. [7]ພຣະຜູ້ເປັນເຈົ້າຈຶ່ງຖາມພະຍາມານວ່າ, “ເຈົ້າມາແຕ່ໃສ?” ພະຍາມານທູນຕອບວ່າ,
“ຂ້ານ້ອຍໄປໆມາໆ ທົ່ວໂລກ.” [8]ແລ້ວພຣະຜູ້ເປັນເຈົ້າຊົງກ່າວຕໍ່ພະຍາມານວ່າ, “ເຈົ້າໄດ້ພິຈາ-
ລະນາໄຕ່ຕອງເບິ່ງໂຢບຜູ້ຮັບໃຊ້ຂອງເຮົາຫລືບໍ່? ໃນໂລກນີ້ ບໍ່ມີໃຜສັດຊື່ ແລະດີເໝືອນລາວ
ລາວຂາບໄຫວ້ເຮົາ ແລະບໍ່ກະທຳໃນສິ່ງທີຊົ່ວຮ້າຍໃດໆ ທັງສິ້ນ.”

[9]ພະຍາມານໄດ້ທູນຕອບວ່າ, “ຖ້າໂຢບບໍ່ໄດ້ຫຍັງ ລາວຈະຂາບໄຫວ້ພຣະອົງຫລື. [10]ພຣະອົງ
ໄດ້ຄຸ້ມຄອງຮັກສາລາວ ແລະຄອບຄົວເຮືອນຊານຂອງລາວກັບຊັບສົມບັດຂອງລາວທຸກຢ່າງ
ພຣະອົງໄດ້ອວຍພອນໃຫ້ວຽກງານທຸກຢ່າງຂອງລາວຈະເລີນຂຶ້ນ ແລະໄດ້ໃຫ້ລາວມີຝູງສັດເພີ່ມ
ທະວີຫລາຍຂຶ້ນທົ່ວປະເທດ. [11]ແຕ່ບັດນີ້ ສົມມຸດວ່າ ພຣະອົງເອົາທຸກສິ່ງທີ່ລາວມີນັ້ນໜີໄປ ລາວ
ກໍຈະປ້ອຍດ່າພຣະອົງຕໍ່ໜ້າພຣະອົງ.”

[12]ພຣະຜູ້ເປັນເຈົ້າຊົງບອກພະຍາມານວ່າ, “ແມ່ນແລ້ວ ທຸກສິ່ງທີ່ໂຢບມີນັ້ນ ເຈົ້າເອົາໄປໄດ້
ແຕ່ເຈົ້າຢ່າທຳຮ້າຍລາວ” ແລ້ວພະຍາມານໄດ້ອອກໄປຈາກພຣະພັກຂອງພຣະເຈົ້າ.

### ລູກ ແລະຊັບສົມບັດຂອງໂຢບຖືກທຳລາຍ

[13]ມື້ໜຶ່ງ ຂະນະທີ່ລູກທັງໝົດຂອງໂຢບ ກຳລັງກິນລ້ຽງຢູ່ໃນເຮືອນຂອງອ້າຍກົກ. [14]ມີຄົນໜຶ່ງ
ແລ່ນມາບອກຂ່າວແກ່ໂຢບວ່າ, “ຂະນະທີ່ພວກເຮົາເອົາງົວໄຖນາຢູ່ ແລະລໍກຳລັງກິນຫຍ້າຢູ່
ໃກ້ໆ. [15]ມີພວກເຊບາເຂົ້າມາປຸ້ນເອົາງົວກັບລໍທັງໝົດໄປ ພວກເຂົາໄດ້ຂ້າຄົນໃຊ້ທັງໝົດ ຍັງ
ແຕ່ຂ້ານ້ອຍຄົນດຽວ ທີ່ລອດຊີວິດໜີມາບອກທ່ານ.”

[16]ຂະນະທີ່ລາວພວມເວົ້າຢູ່ນັ້ນ ໄດ້ມີຄົນໃຊ້ອີກຜູ້ໜຶ່ງມາບອກວ່າ, “ຟ້າໄດ້ຜ່າແກະກັບຄົນລ້ຽງ
ແກະຕາຍຈົນໝົດ ຍັງແຕ່ຂ້ານ້ອຍຄົນດຽວທີ່ລອດຊີວິດໜີມາບອກທ່ານ.”

17ຂະນະທີ່ຄົນໃຊ້ຜູ້ນີ້ພວມເວົ້າຢູ່ ໄດ້ມີຄົນໃຊ້ອີກຜູ້ໜຶ່ງມາບອກວ່າ, “ມີຊາວຄັນເດອາໄດ້ຈັດ
ເປັນສາມພວກ ເຂົ້າມາປຸ້ນພວກຂ້ານ້ອຍ ພວກເຂົາໄດ້ເອົາອູດໄປໝົດ ທັງໄດ້ຂ້າຄົນໃຊ້ຂອງ
ທ່ານໝົດ ຍັງແຕ່ຂ້ານ້ອຍຄົນດຽວທີ່ລອດຊີວິດໜີມາບອກທ່ານ.”
18ຂະນະທີ່ຄົນໃຊ້ຜູ້ນີ້ພວມເວົ້າຢູ່ ກໍມີຄົນໃຊ້ອີກຜູ້ໜຶ່ງມາບອກວ່າ, “ເວລາລູກຊາຍຍິງຂອງ
ທ່ານກິນລ້ຽງຢູ່ທີ່ເຮືອນລູກຊາຍກົກຂອງທ່ານ. 19ໄດ້ມີລົມພະຍຸພັດມາຈາກທະເລຊາຍ ລົມນີ້ໄດ້
ພັດເຮືອນຊານເພພັງໝົດ ລູກຊາຍຍິງຂອງທ່ານໄດ້ຕາຍໝົດ ຍັງແຕ່ຂ້າພະເຈົ້າຄົນດຽວທີ່ລອດ
ຊີວິດໜີມາບອກທ່ານ.”
20ແລ້ວໂຢບໄດ້ລຸກຂຶ້ນ ຈີກເຄື່ອງນຸ່ງຂອງຕົນດ້ວຍຄວາມທຸກໃຈ ລາວແຖຜົມແລ້ວຂາບລົງ
ດິນ. 21ແລ້ວກ່າວວ່າ, “ຂ້າພະເຈົ້າອອກມາຈາກທ້ອງແມ່ດ້ວຍຕົວເປົ່າ ແລະຂ້າພະເຈົ້າຈະກັບໄປ
ດ້ວຍຕົວເປົ່າ ພຣະຜູ້ເປັນເຈົ້າຊົງໂຜດປະທານ ແລະບັດນີ້ພຣະອົງຊົງເອົາໄປເສຍ ສາທຸການ
ແດ່ພຣະນາມຂອງພຣະອົງ.” 22ເຖິງແມ່ນວ່າທຸກຢ່າງນີ້ໄດ້ເກີດຂຶ້ນ ໂຢບ ກໍບໍ່ໄດ້ເຮັດບາບ ໂດຍ
ກ່າວໂທດພຣະເຈົ້າແຕ່ຢ່າງໃດເລີຍ.

# ບົດທີ 2

## ພະຍາມານທົດລອງໂຢບອີກ

1ຢູ່ມາມື້ໜຶ່ງ ຄະນະທູດຂອງພຣະເຈົ້າໄດ້ມາສູ່ພຣະພັກຂອງພຣະອົງອີກ ພະຍາມານກໍມາ
ນຳ. 2ພຣະຜູ້ເປັນເຈົ້າຊົງຖາມພະຍາມານວ່າ, “ເຈົ້າມາແຕ່ໃສ?” ພະຍາມານທູນຕອບວ່າ,
“ຂ້ານ້ອຍໄປໆ ມາໆ ທົ່ວໂລກ.” 3ພຣະຜູ້ເປັນເຈົ້າຊົງຖາມວ່າ, “ເຈົ້າໄດ້ພິຈາລະນາໄຕ່ຕອງ
ເບິ່ງໂຢບ ຜູ້ຮັບໃຊ້ຂອງເຮົາຫລືບໍ່? ໃນໂລກນີ້ ບໍ່ມີໃຜສັດຊື່ ແລະດີຄືລາວ ລາວຂາບໄຫວ້ເຮົາ
ແລະບໍ່ກະທຳໃນສິ່ງທີ່ຊົ່ວຮ້າຍໃດໆທັງສິ້ນ ເຖິງແມ່ນເຮົາໄດ້ອະນຸຍາດໃຫ້ເຈົ້າເຮັດໃຫ້ໂຢບ
ເດືອດຮ້ອນ ຍ້ອນເຈົ້າຊັກຊວນໂດຍບໍ່ມີເຫດຜົນ ລາວກໍຍັງຍຶດໝັ້ນໃນຄວາມສັດຊື່ຕໍ່ໄປ.”
4ພະຍາມານໄດ້ທູນຕອບວ່າ, “ມະນຸດຍອມສະລະທຸກສິ່ງ ເພື່ອໃຫ້ຊີວິດຄົງຢູ່. 5ແຕ່ບັດນີ້
ສົມມຸດວ່າພຣະອົງທຳຮ້າຍຮ່າງກາຍຂອງລາວ ລາວກໍຈະປ້ອຍດ່າພຣະອົງຕໍ່ໜ້າພຣະອົງ.”
6ດັ່ງນັ້ນ ພຣະຜູ້ເປັນເຈົ້າຈຶ່ງຊົງກ່າວຕໍ່ພະຍາມານວ່າ, “ແມ່ນແລ້ວ ລາວຢູ່ໃຕ້ອຳນາດຂອງ
ເຈົ້າ ຂໍແຕ່ເຈົ້າຢ່າຂ້າລາວເທົ່ານັ້ນ.”
7ແລ້ວພະຍາມານໄດ້ໜີອອກຈາກພຣະພັກພຣະຜູ້ເປັນເຈົ້າ ແລະມັນໄດ້ເຮັດໃຫ້ຮ່າງກາຍ
ຂອງໂຢບເປັນບາດທົ່ວໄປ. 8ໂຢບ ໄດ້ໄປນັ່ງຢູ່ໃກ້ໆກອງຂີ້ເທົ່າ ແລະໄດ້ເອົາກະບິ້ງໝໍ້ແຕກຂູດ
ຕາມເນື້ອຕົວຂອງຕົນ.
9ແລ້ວເມຍຂອງໂຢບໄດ້ເວົ້າຕໍ່ລາວວ່າ, “ເຈົ້າຍັງຈະຍຶດໝັ້ນໃນຄວາມສັດຊື່ຢູ່ຕໍ່ໄປຫລື ເປັນ
ຫຍັງເຈົ້າຈຶ່ງບໍ່ດ່າພຣະເຈົ້າ ແລ້ວຕາຍເສຍ.” 10ໂຢບໄດ້ຕອບວ່າ, “ເຈົ້າເວົ້າຢ່າງບ້າໆ ເມື່ອ
ພຣະເຈົ້າປະທານຂອງດີໃຫ້ເຮົາ ເຮົາກໍຍິນດີຮັບເອົາ ແຕ່ເມື່ອພຣະອົງປະທານຄວາມຍາກລຳ-
ບາກໃຫ້ເຮົາ ເປັນຫຍັງເຮົາຈຶ່ງຈົ່ມທຸກ” ເຖິງແມ່ນຄວາມທຸກທັງໝົດນີ້ໄດ້ເກີດຂຶ້ນ ໂຢບກໍບໍ່ໄດ້
ກ່າວສິ່ງໃດປະໝາດພຣະເຈົ້າເລີຍ.

## ມິດສະຫາຍຂອງໂຢບມາຢ້ຽມຢາມ

[11]ເມື່ອມິດສະຫາຍສາມຄົນຂອງໂຢບຄື ເອລີຟັດ ຊາວເມືອງເຕມານ ບີນດັດ ຊາວເມືອງ
ຊູອາ ແລະ ໂຊຟາ ຊາວເມືອງນາອາມາ ໄດ້ຍິນຂ່າວວ່າ ໂຢບມີຄວາມທຸກລຳບາກຫລາຍ
ພວກເຂົາກໍນັດກັນມາຢ້ຽມຢາມລາວ ເພື່ອເລົ້າໂລມຈິດໃຈລາວ. [12]ໃນລະຫວ່າງທີ່ພວກເຂົາຍັງຢູ່
ບໍ່ໄກປານໃດກັບໂຢບ ພວກເຂົາກໍຫລຽວເຫັນໂຢບ ແຕ່ຈື່ບໍ່ໄດ້ ເມື່ອພວກເຂົາມາເຖິງກໍຮ້ອງໄຫ້
ຄວນຄາງ ຈີກເສື້ອຜ້າຂອງຕົນສະແດງຄວາມເສຍໃຈ ແລ້ວຫວ່ານຂີ້ຝຸ່ນດິນເທິງອາກາດ ແລະ
ໃສ່ຫົວຂອງຕົນ. [13]ຕໍ່ມາກໍນັ່ງຢູ່ໃນດິນກັບລາວຕະຫລອດເຈັດມື້ເຈັດຄືນ ໂດຍບໍ່ເວົ້າຈາຫຍັງ
ເພາະພວກເຂົາເຫັນວ່າ ໂຢບມີຄວາມທຸກຢ່າງຫລວງຫລາຍ.

# ບົດທີ 3

## ໂຢບຈົ່ມທຸກຕໍ່ພຣະເຈົ້າ

[1]ໃນທີ່ສຸດ ໂຢບກໍຮ້ອງດ່າວັນເກີດຂອງຕົນວ່າ:

[2-3] ຂໍພຣະເຈົ້າຈົ່ງສາບແຊ່ງວັນເກີດຂອງຂ້ານ້ອຍ
ຈົ່ງສາບແຊ່ງຄ່ຳຄືນມື້ຂ້ານ້ອຍມາເກີດ.
[4] ໂອພຣະຜູ້ເປັນເຈົ້າຂໍຈົ່ງໃຫ້ວັນນັ້ນດຳມືດ
ຢ່າລະນຶກເຖິງວັນນັ້ນອີກ
ຢ່າໃຫ້ແສງສະຫວ່າງສ່ອງໃນວັນນັ້ນ.
[5] ຈົ່ງເຮັດໃຫ້ວັນນັ້ນມືດຕຶບ
ຂໍໃຫ້ເມກປົກຄຸມແສງຕາເວັນໃຫ້ດຳມືດ.
[6] ຈົ່ງລຶບຄືນນັ້ນອອກ
ຢ່ານັບມັນເຂົ້າເປັນມື້ໜຶ່ງຂອງປີອີກເລີຍ.
[7] ຈົ່ງເຮັດໃຫ້ຄືນນັ້ນ ເປັນໝັນປາດສະຈາກຄວາມມ່ວນຊື່ນ.
[8] ຈົ່ງບອກໝໍມົນສາບແຊ່ງວັນນັ້ນ
ພວກເຂົາມີຄວາມສາມາດສັ່ງໃຫ້ເງືອກຂຶ້ນມາໄດ້.
[9] ຂໍໃຫ້ດາວພະສຸກດຳມືດໄປ
ຈົ່ງໃຫ້ຄວາມຫວັງຄອຍຖ້າແສງອະລຸນຂອງຄືນນັ້ນໝົດໄປ.
[10] ຈົ່ງສາບແຊ່ງຄືນນັ້ນ ເພາະວ່າມັນໃຫ້ຂ້ານ້ອຍໄດ້ເກີດມາ
ແລະເພາະມັນໄຂຊ່ອງທາງໃຫ້ຂ້ານ້ອຍມີຄວາມໂສກເສົ້າເສຍໃຈ.
[11] ຂ້ານ້ອຍຢາກຕາຍເສຍຕັ້ງແຕ່ຢູ່ໃນທ້ອງແມ່
ຫລືຕາຍເສຍແຕ່ເວລາເກີດທຳອິດ.
[12] ເປັນຫຍັງແມ່ຂອງຂ້ານ້ອຍຈຶ່ງອູ້ມຂ້ານ້ອຍໄວ້ໃນຕັກຂອງເພິ່ນ
ເປັນຫຍັງເພິ່ນຈຶ່ງໃຫ້ຂ້ານ້ອຍກິນນົມ.
[13] ຖ້າຫາກຂ້ານ້ອຍຕາຍເສຍໃນເວລານັ້ນ ບັດນີ້ຂ້ານ້ອຍກໍໝົດທຸກ.

14 ຈະຫລັບສະບາຍຢູ່ກັບກະສັດ ແລະທີ່ປຶກສາທັງຫລາຍຂອງພຣະອົງ
ຜູ້ໄດ້ສ້າງພະລາຊະວັງເກົ່າແກ່ຂຶ້ນໃໝ່.
15 ແລ້ວຂ້ານ້ອຍກໍຈະນອນຫລັບເໝືອນເຈົ້ານາຍທັງຫລາຍ
ຊຶ່ງມີເງິນຄຳໄວ້ເຕັມເຮືອນ.
16 ຫລືນອນຫລັບເໝືອນແອນ້ອຍທີ່ຕາຍໃນທ້ອງແມ່.
17 ໃນຂຸມຝັງສົບນັ້ນ ຄົນຊົ່ວຈະຢຸດເຮັດຊົ່ວ
ແລະຄົນງານຜູ້ອິດເມື່ອຍກໍຈະໄດ້ຢຸດພັກ.
18 ແມ່ນແຕ່ນັກໂທດກໍຢູ່ສະຫງົບສຸກ
ເພາະບໍ່ໄດ້ຍິນສຽງຮ້າຍຂອງນາຍຄຸມ.
19 ຢູ່ທີ່ນັ້ນທຸກໆ ຄົນທັງຜູ້ໃຫຍ່ຜູ້ນ້ອຍ
ແລະພວກຂ້າທາດກໍເປັນອິດສະຫລະ.
20 ເປັນຫຍັງຈຶ່ງໃຫ້ຄົນທີ່ທຸກເວດທະນາມີຊີວິດຢູ່
ເປັນຫຍັງຈຶ່ງໃຫ້ແສງສະຫວ່າງແກ່ຜູ້ໂສກເສົ້າເສຍໃຈ.
21 ພວກເຂົາລໍຄອຍຄວາມຕາຍ ແຕ່ມັນກໍບໍ່ຕາຍ
ພວກເຂົາມັກຂຸມຝັງສົບຫລາຍກວ່າມັກຊັບສິນ.
22 ພວກເຂົາບໍ່ມີຄວາມສຸກ ຖ້າບໍ່ຕາຍ ແລະຝັງເສຍກ່ອນ.
23 **ພຣະເຈົ້າ**ຊົງຕັດອະນາຄົດຂອງພວກເຂົາ
ແລະປິດລ້ອມພວກເຂົາໃນທຸກດ້ານ.
24 ຂ້ານ້ອຍຮ້ອງໄຫ້ແທນການກິນເຂົ້າ
ຂ້ານ້ອຍບໍ່ເຄີຍຢຸດຮ້ອງໄຫ້.
25 ທຸກສິ່ງທີ່ຂ້ານ້ອຍຢ້ານກົວຕົກຖືກຂ້ານ້ອຍ.
26 ຂ້ານ້ອຍບໍ່ມີຄວາມສະຫງົບ ຫລືໄດ້ຢຸດພັກ
ແລະຄວາມຍາກລຳບາກບໍ່ເຄີຍໝົດສິ້ນໄປ.

# ບົດທີ 4

## ມິດສະຫາຍສົນທະນາກັບໂຢບ

1ຕໍ່ມາ ເອລີຟັດ ຊາວເຕມານໄດ້ເວົ້າກັບໂຢບວ່າ:
2 ຖ້າຂ້ອຍເວົ້າເຈົ້າຊິບໍ່ຮ້າຍບໍ?
ຂ້ອຍບໍ່ສາມາດອົດເວົ້າຕໍ່ໄປໄດ້.
3 ເຈົ້າໄດ້ສອນຄົນມາຫລາຍແລ້ວ
ແລະໄດ້ໃຫ້ຄົນມືອ່ອນມີກຳລັງແຂງແຮງ.
4 ເມື່ອຄົນໃດຄົນໜຶ່ງຕຳສະດຸດ ເມື່ອຍ ແລະໝົດແຮງ
ຄຳເວົ້າຂອງເຈົ້າກໍຊ່ອຍໃຫ້ລາວຢືນຂຶ້ນໄດ້.

5 ແຕ່ບັດນີ້ ຄວາມຍາກລຳບາກໄດ້ມາຖືກເຈົ້າແລ້ວ
ເຈົ້າໝົດກຳລັງໃຈທີ່ຈະສູ້ກັບມັນ.
6 ເຈົ້າຂາບໄຫວ້ພຣະເຈົ້າ ແລະຊີວິດຂອງເຈົ້າກໍບໍ່ໄດ້ດ່າງພ້ອຍ
ດັ່ງນັ້ນ ເຈົ້າຄວນມີຄວາມໝັ້ນໃຈ ແລະຄວາມຫວັງ.
7 ຈົ່ງຄິດເບິ່ງວ່າ ເຈົ້າເຫັນໃຜແດ່ຈັກຄົນໜຶ່ງ
ທີ່ເປັນຄົນຊອບທຳ ແຕ່ໄດ້ຮັບຄວາມພິນາດ.
8 ຕາມທີ່ຂ້ອຍໄດ້ເຫັນຄື ບຸກຄົນຜູ້ໃດໄຖຄວາມຜິດ
ແລະຫວ່ານຄວາມຊົ່ວ ກໍໄດ້ເກັບກ່ຽວຢ່າງນັ້ນ.
9 ພຣະເຈົ້າຊົງທຳລາຍພວກເຂົາດ້ວຍພຣະພິໂລດເໝືອນລົມພະຍຸ.
10 ຄົນຊົ່ວແຜດສຽງຮ້ອງຄາງເໝືອນດັ່ງສິງ
ແຕ່ພຣະເຈົ້າຊົງໃຫ້ພວກເຂົາງຽບ ແລະຫັກແຂ້ວເຂົາເສຍ.
11 ເໝືອນສິງທີ່ບໍ່ມີຫຍັງຂົບກິນເປັນອາຫານ
ມັນຕ້ອງຕາຍ ແລະລູກຂອງມັນກໍກະຈັດກະຈາຍໄປ.
12 ມີຄຳໜຶ່ງດັງມາເຖິງຂ້ອຍຢ່າງຄ່ອຍໆ
ຄຳນັ້ນດັງມາຄ່ອຍຫລາຍເກືອບຂ້ອຍບໍ່ໄດ້ຍິນ.
13 ມັນເໝືອນກັບຄວາມຝັນຮ້າຍຊຶ່ງຮົບກວນການຫລັບນອນຂອງຂ້ອຍ
14 ຂ້ອຍຢ້ານກົວຕົວສັ່ນ
ທົ່ວຕົນຕົວຂອງຂ້ອຍສັ່ນສະທ້ານດ້ວຍຄວາມຢ້ານ.
15 ມີລົມເບົາໆພັດໜ້າຂອງຂ້ອຍ
ຂົນໜັງຂອງຂ້ອຍລຸກຊັນດ້ວຍຄວາມຕົກໃຈ.
16 ຂ້ອຍໄດ້ເຫັນສິ່ງໜຶ່ງຢູ່ທີ່ນັ້ນ
ຂ້ອຍໄດ້ຈ້ອງເບິ່ງ ແຕ່ບອກບໍ່ໄດ້ວ່າແມ່ນຫຍັງ
ແລ້ວຂ້ອຍໄດ້ຍິນສຽງດັງອອກມາແຕ່ຄວາມງຽບວ່າ:
17 “ໃນສາຍພຣະເນດຂອງພຣະເຈົ້າຄົນຊອບທຳມີຫລື?
ມະນຸດຈະບໍລິສຸດຕໍ່ໜ້າຜູ້ສ້າງຕົນໄດ້ຫລື?
18 ພຣະເຈົ້າບໍ່ໄວ້ພຣະໄທໃນພວກເທວະດາຂອງພຣະອົງ
ພຣະອົງຊົງພົບເຫັນຄວາມຜິດໃນເທວະດາເຫລົ່ານັ້ນ
19 ເຈົ້າຄິດວ່າພຣະອົງຈະຊົງໄວ້ວາງພຣະໄທໃນສິ່ງທີ່ສ້າງດ້ວຍດິນໜຽວຫລື?
ສິ່ງທີ່ເປັນດິນນັ້ນຈະຖືກບີບເໝືອນບີບແມງເມົ່າ.
20 ຄົນຜູ້ໜຶ່ງອາດຈະມີຊີວິດຢູ່ໃນເວລາເຊົ້າ
ແຕ່ກ່ອນຄໍ່າລາວອາດຈະຕາຍເສຍໂດຍບໍ່ມີໃຜຮູ້.
21 ສິ່ງທັງໝົດທີ່ລາວມີມານັ້ນກໍສູນເສຍໄປ
ລາວຕາຍໄປໂດຍບໍ່ທັນຮູ້ຫຍັງ?”

# ບົດທີ 5

1 ໂຢບເອີຍ ຈົ່ງເອີ້ນເບິ່ງດູ ມີຜູ້ໃດຈະຕອບເຈົ້າ
ເທວະດາອົງໃດຈະມາຊ່ອຍເຈົ້າ.
2 ຄົນໃຈຮ້ອນຕາຍຍ້ອນຄວາມໂກດເຄືອງ
ຄົນໂງ່ຕາຍຍ້ອນຄວາມຮ້າຍ.
3 ຂ້ອຍໄດ້ເຫັນພວກຄົນໂງ່ເບິ່ງຄືວ່າມີຖານະໝັ້ນຄົງ
ແຕ່ທັນໃດນັ້ນຄຳສາບແຊ່ງກໍຕົກຖືກເຮືອນຂອງລາວ.
4 ພວກລູກຫລານຂອງລາວບໍ່ເຄີຍໄດ້ພົບຄວາມປອດໄພ
ໃນສານຕັດສິນບໍ່ມີໃຜຢືນຂຶ້ນຊ່ອຍລາວ.
5 ຄົນຜູ້ຫິວເຂົ້າຈະກິນຜົນເກັບກ່ຽວຂອງຕົນ
ແມ່ນແຕ່ພືດຜົນທີ່ງອກຂຶ້ນໃນກາງໜາມລາວກໍເອົາໄປ
ຄົນອຶດຢາກຈະອຶດສາຍາກໄດ້ສົມບັດຂອງລາວ.
6 ບາບ ແລະຄວາມລຳບາກບໍ່ໄດ້ງອກອອກມາຈາກດິນ.
7 ແມ່ນແລ້ວ ມະນຸດໄດ້ຮັບຄວາມຍາກລຳບາກມາຈາກການກະທຳຂອງຕົນ
ແນ່ນອນເໝືອນກັບແປວໄຟຍ່ອມປິວຂຶ້ນຈາກກອງໄຟ.
8 ຖ້າຂ້ອຍເປັນເຈົ້າ ຂ້ອຍຈະຄືນໄປຫາພຣະເຈົ້າ
ແລະມອບເລື່ອງລາວຂອງເຈົ້າຕໍ່ພຣະອົງ.
9 ພຣະອົງຊົງກະທຳການອັນຍິ່ງໃຫຍ່ທີ່ພວກເຮົາເຂົ້າໃຈບໍ່ໄດ້
ແລະການອັດສະຈັນຂອງພຣະອົງກໍນັບບໍ່ຖ້ວນ.
10 ພຣະອົງຊົງໃຫ້ຝົນຕົກລົງມາເທິງແຜ່ນດິນ
ແລະຊົງໃຫ້ນ້ຳມີໃນທົ່ງນາ.
11 ເອີ ແມ່ນພຣະເຈົ້າເປັນຜູ້ຊົງຍົກຄົນຕ່ຳຕ້ອຍຂຶ້ນ
ແລະຊົງໂຜດຜູ້ໂສກເສົ້າເສຍໃຈໃຫ້ໄດ້ຮັບຄວາມມ່ວນຊື່ນ.
12-13 ພຣະອົງຊົງຂັດຂວາງເລ່ກົນຂອງຄົນຫລອກລວງ
ຊົງດັກຈັບຄົນສະຫລາດດ້ວຍອຸບາຍຂອງພວກເຂົາເອງ
ເພື່ອບໍ່ໃຫ້ພວກເຂົາເຮັດຫຍັງສຳເລັດໄດ້.
14 ເຖິງແມ່ນກາງເວັນພວກເຂົາກໍຢູ່ໃນຄວາມມືດ.
15 ແຕ່ພຣະເຈົ້າຊົງຊ່ອຍຄົນຍາກຈົນໃຫ້ພົ້ນຈາກຄວາມຕາຍ
ແລະຊົງຊ່ອຍຄົນຂັດສົນໃຫ້ພົ້ນຈາກການກົດຂີ່.
16 ພຣະອົງຊົງໃຫ້ຄວາມຫວັງແກ່ຄົນຍາກຈົນ
ແລະຊົງປິດປາກຄົນອະທຳ.
17 ຄວາມສຸກຍ່ອມມີກັບບຸກຄົນຜູ້ທີ່ພຣະເຈົ້າຊົງຕີສອນ
ຢ່າເສຍໃຈເມື່ອພຣະອົງຊົງລົງໂທດ.

18 ພຣະເຈົ້າຊົງເຮັດໃຫ້ບາດເຈັບ ແຕ່ພຣະອົງຊົງພັນບາດແຜໃຫ້
ພຣະຫັດຂອງພຣະອົງຊົງຊ້ຽນຕີເຈົ້າ ແຕ່ພຣະອົງຊົງຮັກສາໃຫ້ດີ.
19 ພຣະອົງຈະຮັກສາເຈົ້າໃຫ້ພົ້ນຈາກອັນຕະລາຍຕະຫລອດເວລາ.
20 ເມື່ອມີການອຶດຢາກ ພຣະອົງຈະຊົງຊ່ອຍເຈົ້າບໍ່ໃຫ້ຕາຍ
ແລະຈະຊົງປ້ອງກັນເຈົ້າບໍ່ໃຫ້ຕາຍໃນສົງຄາມ.
21 ພຣະເຈົ້າຈະຊ່ອຍເຈົ້າໃຫ້ພົ້ນຈາກການຕົວະ ແລະໝິ່ນປະໝາດ
ພຣະອົງຈະຊົງຊ່ອຍເຈົ້າເມື່ອໄພວິບັດມາເຖິງ.
22 ເຈົ້າຈະຫົວຂວັນການທຳລາຍ ແລະການອຶດຢາກ
ຈະບໍ່ຢ້ານກົວສັດປ່າ.
23 ທົ່ງນາທີ່ເຈົ້າໄຖຈະບໍ່ມີຫີນ
ສັດປ່າທີ່ໂຫດຮ້າຍຈະບໍ່ທຳຮ້າຍເຈົ້າ.
24 ເຈົ້າຈະມີຊີວິດຢູ່ໃນຕູບຜ້າເຕັນຢ່າງສະຫງົບສຸກ
ແລ້ວເຈົ້າຈະເຫັນແກະຂອງເຈົ້າມີຄວາມປອດໄພ.
25 ເຈົ້າຈະມີລູກຫລານເໝືອນກັບຫຍ້າ.
26 ເຈົ້າຈະມີອາຍຸຍືນຈົນເຖົ້າແກ່
ເໝືອນເມັດເຂົ້າສຸກໃນລະດູເກັບກ່ຽວ.
27 ໂຢບເອີຍ ພວກເຮົາໄດ້ຮຽນຮູ້ສິ່ງນີ້ຢ່າງຄັກແນ່ແລ້ວ
ມັນເປັນຄວາມຈິງ ບັດນີ້ຈົ່ງຮັບໄວ້ເທີ້ນ.

# ບົດທີ 6

## ໂຢບຂໍຄວາມເມດຕາ

1 ແລ້ວໂຢບຕອບວ່າ,
2 “ໂອ ຂ້ອຍຢາກໃຫ້ຊັ່ງເບິ່ງຄວາມເສົ້າໂສກຂອງຂ້ອຍ
ແລະເອົາຄວາມລຳບາກຍາກເຂັນຂອງຂ້ອຍໃສ່ໄວ້ໃນຕາຊົ່ງ
3 ບັດນີ້ ກໍຈະໜັກກວ່າດິນຊາຍໃນທະເລ
ເພາະເຫດນີ້ ຄຳເວົ້າຂອງຂ້ອຍກໍຈະຖືກກືນໄປໝົດ
4 ເພາະທະນູຂອງອົງຜູ້ມີລິດອຳນາດກໍຢູ່ໃນຕົວຂ້ອຍ,
ຈິດໃຈຂອງຂ້ອຍດື່ມພິດຂອງມັນ ຄວາມໜ້າຢ້ານ
ທີ່ມາຈາກພຣະເຈົ້າກໍຕຽມຕົວຕໍ່ສູ້ຂ້ອຍ
5 ລາປ່າຮ້ອງເມື່ອມັນມີຫຍ້າກິນ
ຫລືງົວເຖິກຮ້ອງເທິງກອງຫຍ້າຂອງມັນຫລື?
6 ຈະຮັບປະທານສິ່ງທີ່ຈືດ ໂດຍບໍ່ໃສ່ເກືອໄດ້ບໍ
ຫລືໄຂ່ຂາວນັ້ນມີລົດແຊບຫລື?

7 ສິ່ງທີ່ຈິດໃຈຂອງຂ້ອຍບໍ່ຍອມແຕະຕ້ອງນັ້ນ
ກັບການເປັນອາຫານທີ່ທົນທຸກຂອງຂ້ອຍ
8 ໂອ ຂ້ອຍຢາກຈະໄດ້ສິ່ງທີ່ທູນຂໍ
ແລະຂໍພຣະເຈົ້າໄດ້ປະທານຕາມຄວາມປາດຖະໜາຂອງຂ້ອຍ
9 ຖ້າວ່າພຣະເຈົ້າພໍພຣະໄທທີ່ຈະບີບຄັ້ນຂ້ອຍ
ພຣະອົງຈະໃຊ້ພຣະຫັດຂອງພຣະອົງຢ່າງເຕັມທີ່ ແລະຕັດຂ້ອຍອອກເສຍ
10 ເພາະນີ້ຈະເປັນການປອບໃຈຂອງຂ້ອຍ
ຂ້ອຍຈະເສີມກຳລັງໃນຄວາມທຸກ ຂໍຢ່າໃຫ້ພຣະອົງສະແດງພຣະເມດຕາ
ເພາະຂ້ອຍບໍ່ໄດ້ປົກປິດພຣະທຳຂອງອົງຜູ້ບໍລິສຸດນັ້ນ
11 ຂ້ອຍມີກຳລັງຫຍັງ ທີ່ຂ້ອຍຈະມີຄວາມຫວັງ
ແລະແມ່ນຫຍັງເປັນອະວະສານຂອງຂ້ອຍ ທີ່ຂ້ອຍຈະຕໍ່ຊີວິດຂອງຂ້ອຍໄດ້
12 ກຳລັງຂອງຂ້ອຍເປັນກຳລັງຄືຫີນບໍ
ເນື້ອໜັງຂອງຂ້ອຍເປັນເນື້ອໜັງທອງເຫລືອງບໍ?
13 ຂ້ອຍບໍ່ມີຄວາມຊ່ວຍເຫລືອໃນຕົວຂ້ອຍບໍ
ຂ້ອຍຈົນປັນຍາແລ້ວບໍ?
14 ບຸກຄົນຜູ້ໃດໝົດຄວາມຫວັງກໍຄວນໄດ້ຮັບຄວາມກະລຸນາຈາກເພື່ອນ
ແຕ່ລາວປະຖິ້ມຄວາມຢຳເກງອົງຜູ້ມີລິດອຳນາດ
15 ພີ່ນ້ອງຂອງຂ້ອຍທໍລະຍົດຄືແມ່ນໍ້າ
ເໝືອນແມ່ນໍ້າທີ່ໄຫລລົ້ນໄປ
16 ເປັນນໍ້າຂຸ່ນໄປເທດດ້ວຍນໍ້າກ້ອນ
ແລະຫິມະເຊື່ອງຕົວຢູ່ໃນນັ້ນ
17 ເມື່ອມັນຮ້ອນຂຶ້ນມັນກໍຫາຍໄປ
ເມື່ອຮ້ອນມັນກໍສູນຫາຍໄປຈາກບ່ອນຂອງມັນ
18 ໝູ່ຄົນເດີນທາງຫັນອອກຈາກທາງຂອງຕົນ
ພວກເຂົາຂຶ້ນໄປຍັງບ່ອນຮ້າງເປົ່າ ແລະພິນາດ
19 ໝູ່ຄົນເດີນທາງຂອງເມືອງເຕມາຫລຽວເບິ່ງ
ຄົນເດີນທາງຂອງເມືອງເຊບາລໍຄອຍຖ້າໝູ່ຄົນເຫລົ່ານັ້ນ
20 ເພາະພວກເຂົາທັງຫລາຍຫວັງໃຈ ພວກເຂົາຈຶ່ງຕ້ອງຜິດຫວັງ
ພວກເຂົາມາເຖິງບ່ອນນັ້ນ ແລະຕ້ອງອັບອາຍໃຈ
21 ເພາະບັດນີ້ ເຈົ້າທັງຫລາຍກໍບໍ່ມີຄວາມໝາຍ
ເຈົ້າເຫັນຄວາມລຳບາກຍາກເຂັນຂອງຂ້ອຍ ແລະເຈົ້າກໍຢ້ານກົວ
22 ຂ້ອຍເວົ້າວ່າ ‘ຂໍຂອງຂວັນໃຫ້ຂ້ອຍແດ່’
ຫລື ‘ຂໍສິນບົນຈາກຊັບສິນຂອງເຈົ້າໃຫ້ຂ້ອຍ’

23 ຫລືວ່າ ‘ຂໍຊ່ວຍຂ້ອຍໃຫ້ພົ້ນຈາກມືຂອງສັດຕູ’
ຫລືວ່າ ‘ຂໍໄຖ່ຂ້ອຍຈາກມືຂອງຜູ້ມີອຳນາດ’ ຫລື
24 ສອນຂ້ອຍແດ່ ແລະຂ້ອຍຈະງຽບ
ຂໍເຮັດໃຫ້ຂ້ອຍເຂົ້າໃຈວ່າ ຂ້ອຍຜິດໃນຂໍ້ໃດ
25 ຄຳສັດຊື່ມີອຳນາດຫລາຍແທ້ໆ
ແຕ່ຄຳຕິຕຽນຂອງເຈົ້າຕິຕຽນຫຍັງ
26 ເຈົ້າຄິດວ່າເຈົ້າຕິຕຽນຖ້ອຍຄຳໄດ້ຫລື
ເມື່ອຄຳປາໄສຂອງຄົນໝົດຫວັງເປັນແຕ່ລົມ
27 ເອີ ເຈົ້າທັງຫລາຍເອົາປຽບລູກກຳພ້າພໍ່
ແລະຊຸດຂຸມຈັບເພື່ອນຂອງເຈົ້າ
28 ແຕ່ບັດນີ້ ຂໍເບິ່ງຂ້ອຍດ້ວຍຄວາມພໍໃຈເຖີດ
ເພາະຖ້າຂ້ອຍຂີ້ຕົວະ ກໍຈະປາກົດແຈ້ງແກ່ເຈົ້າ
29 ຂໍເຊີນກັບຄືນມາຄິດໃໝ່ ຢ່າເຮັດຄວາມຊົ່ວຊ້າເລີຍ ເອີ
ກັບຄືນມາຄິດໃໝ່ເຖີດ ຂ້ອຍຍັງຊອບທຳຢູ່
30 ມີຄວາມຊົ່ວຊ້າສິ່ງໃດເທິງລີ້ນຂ້ອຍບໍ
ຂ້ອຍບໍ່ໄດ້ຮູ້ເຖິງລົດຊາດໄພພິບັດບໍ?”

# ບົດທີ 7

## ໂຢບອ້ອນວອນຕໍ່ພຣະເຈົ້າ

1 “ມະນຸດບໍ່ມີເວລາກຳນົດເທິງແຜ່ນດິນໂລກບໍ
ແລະຊີວິດຂອງພວກເຂົາບໍ່ເໝືອນຊີວິດຂອງລູກຈ້າງບໍ
2 ຄືກັບຂ້າທາດທີ່ປາດຖະໜາຮົ່ມໄມ້
ແລະຄືກັບລູກຈ້າງຜູ້ຊອກຫາຄ່າຈ້າງງານຂອງຕົນ
3 ເຊັ່ນດຽວກັນ ຂ້ອຍຕ້ອງໄດ້ຮັບສ່ວນເສຍປະໂຫຍດເປັນເດືອນໆ
ແລະພວກເຂົາແບ່ງຄືນຄວາມທຸກຍາກອິດເມື່ອຍໃຫ້ແກ່ຂ້ອຍ
4 ເມື່ອຂ້ອຍນອນລົງ ຂ້ອຍກ່າວວ່າ ເມື່ອໃດໜໍ ຂ້ອຍຈະລຸກຂຶ້ນ
ແລະກາງຄືນຈະຜ່ານພົ້ນໄປ’ ແລະຂ້ອຍກໍພິກໄປພິກມາຈົນຮຸ່ງເຊົ້າ
5 ເນື້ອໜັງຂອງຂ້ອຍເຕັມໄປດ້ວຍໜອນ ແລະກ້ອນຝຸ່ນ
ໜັງຂອງຂ້ອຍກໍຫ່ຽວແຫ້ງໄປ ແລະມີນ້ຳໜອງໄຫລອອກມາ
6 ວັນຄືນຂອງຂ້ອຍໄວກວ່າກະສວຍທໍຜ້າຂອງຊ່າງທໍ
ແລະສິ້ນສຸດລົງດ້ວຍຂາດຄວາມຫວັງ
7 ຂໍໄດ້ຈົດຈຳໄວ້ວ່າ ຊີວິດຂອງຂ້ານ້ອຍເປັນແຕ່ລົມຫາຍໃຈ
ຕາຂອງຂ້ານ້ອຍຈະບໍ່ເຫັນສິ່ງດີອີກເລີຍ

8 ຕາຂອງຜູ້ທີ່ເຫັນຂ້ານ້ອຍຈະບໍ່ໄດ້ເບິ່ງຂ້ານ້ອຍອີກຕໍ່ໄປ
ຝ່າຍພຣະເນດຂອງພຣະອົງເບິ່ງຫາຂ້ານ້ອຍ ຂ້ານ້ອຍກໍໄປເສຍແລ້ວ
9 ເມກຈາງ ແລະຫາຍໄປສັນໃດ
ບຸກຄົນທີ່ລົງໄປສູ່ແດນຄົນຕາຍກໍບໍ່ໄດ້ຂຶ້ນມາສັນນັ້ນ
10 ພວກເຂົາຈະບໍ່ກັບໄປເຮືອນຂອງຕົນອີກ
ຫລືທີ່ຢູ່ຂອງພວກເຂົາກໍຈະບໍ່ຮູ້ຈັກອີກເລີຍ
11 ເພາະສະນັ້ນ ຂ້ານ້ອຍຈຶ່ງບໍ່ຫ້າມປາກຂອງຂ້ານ້ອຍ
ຂ້ານ້ອຍຈະເວົ້າດ້ວຍຈິດໃຈທີ່ແສນລະທົມຂອງຂ້ານ້ອຍ
ຂ້ານ້ອຍຈະຈົ່ມດ້ວຍຄວາມຂົມຂື່ນຂອງຈິດໃຈຂອງຂ້ານ້ອຍ
12 ຂ້ານ້ອຍເປັນທະເລ ຫລືເປັນປາວານບໍ
ພຣະອົງຈຶ່ງໄດ້ວາງເວນຍາມເຝົ້າຂ້ານ້ອຍ
13 ເມື່ອຂ້ານ້ອຍເວົ້າວ່າ 'ຕຽງຂອງຂ້ອຍຈະເລົ້າໂລມຂ້ອຍ
ບ່ອນນອນຂອງຂ້ອຍຈະຊ່ວຍເຫລືອການຮ້ອງທຸກຂອງຂ້ອຍ'
14 ແລ້ວພຣະອົງກໍເຮັດໃຫ້ຂ້ານ້ອຍຢ້ານກົວດ້ວຍຄວາມຝັນ
ແລະເຮັດໃຫ້ຂ້ານ້ອຍຄຶດຢ້ານດ້ວຍນິມິດ
15 ຈິດໃຈຂ້ານ້ອຍຈຶ່ງເລືອກທີ່ຈະຖືກຮັດຄໍຕາຍ
ແລະເລືອກຄວາມຕາຍແທນຊີວິດຂອງຂ້ານ້ອຍ
16 ຂ້ານ້ອຍເບື່ອຊີວິດ ຂ້ານ້ອຍຈະບໍ່ຢູ່ຕະຫລອດໄປ
ປ່ອຍຂ້ານ້ອຍແຕ່ລຳພັງເຖີດ
ເພາະວັນຄືນຂອງຂ້ານ້ອຍເປັນແຕ່ພຽງສິ່ງທີ່ໄຮ້ປະໂຫຍດ
17 ມະນຸດເປັນສິ່ງໃດ ພຣະອົງຈຶ່ງໄດ້ຖືວ່າພວກເຂົາສຳຄັນຫລາຍ
ແລະເອົາໃຈໃສ່ພວກເຂົາ
18 ໄດ້ຢ້ຽມຢາມພວກເຂົາທຸກເຊົ້າ
ໄດ້ລອງເບິ່ງພວກເຂົາທຸກເທື່ອ
19 ອີກດົນເທົ່າໃດພຣະອົງຈຶ່ງຈະບໍ່ອອກໄປຈາກຂ້ານ້ອຍ
ຫລືປ່ອຍຂ້ານ້ອຍແຕ່ລຳພັງ ຈົນຂ້ານ້ອຍຈະກືນນ້ຳລາຍຂອງຕົນໄດ້
20 ຂ້າແດ່ພຣະອົງຜູ້ປົກປັກຮັກສາມະນຸດ ຂ້ານ້ອຍເຮັດບາບແລ້ວ
ຂ້ານ້ອຍຈະເຮັດຫຍັງແດ່ເພື່ອພຣະອົງບໍ
ເປັນຫຍັງພຣະອົງຈຶ່ງໄດ້ເຮັດໃຫ້ຂ້ານ້ອຍເປັນເປົ້າໝາຍຂອງພຣະອົງ
ອັນເປັນພາລະໜັກແກ່ຂ້ານ້ອຍເອງ
21 ເປັນຫຍັງພຣະອົງບໍ່ປະທານໄພແກ່ການລະເມີດຂອງຂ້ານ້ອຍ
ແລະນຳເອົາຄວາມຊົ່ວຊ້າຂອງຂ້ານ້ອຍໄປເສຍ
ເພາະບັດນີ້ ຂ້ານ້ອຍຈະນອນລົງໃນຂີ້ຝຸ່ນດິນ

ພຣະອົງຈະໄດ້ຊອກຫາຂ້ານ້ອຍໃນເວລາເຊົ້າ
ແຕ່ຂ້ານ້ອຍຈະບໍ່ຢູ່ແລ້ວ"

# ບົດທີ 8

## ບິນດັດວ່າໂຢບເປັນຄົນໜ້າຊື່ໃຈຄົດ

1 ແລ້ວບິນດັດຄົນຊູອາຕອບວ່າ
2 "ເຈົ້າຈະເວົ້າຢ່າງນີ້ຢູ່ດົນປານໃດ
ແລະຄຳເວົ້າຂອງເຈົ້າຈະເປັນພາຍຸດົນປານໃດ
3 ພຣະເຈົ້າໄດ້ປັ່ນປ່ວນຄວາມຍຸດຕິທຳບໍ
ຫລືອົງຜູ້ມີລິດອຳນາດປັ່ນປ່ວນຄວາມທ່ຽງທຳບໍ
4 ຖ້າລູກຂອງເຈົ້າໄດ້ເຮັດບາບຕໍ່ພຣະອົງ
ແລະພຣະອົງໄດ້ປະຖິ້ມພ້ອມເຂົາທັງຫລາຍ
ເພາະເຫດການລະເມີດຂອງພວກເຂົາ
5 ຖ້າເຈົ້າຈະໝັ່ນສະແຫວງຫາພຣະເຈົ້າ
ແລະອ້ອນວອນຕໍ່ອົງຜູ້ມີລິດອຳນາດ
6 ຖ້າເຈົ້າບໍລິສຸດ ແລະທ່ຽງທຳແທ້
ບັດນີ້ ພຣະອົງກໍຈະໄດ້ຕື່ນຂຶ້ນເພື່ອເຈົ້າ
ແລະໃຫ້ທີ່ອາໄສຂອງຄວາມຊອບທຳຂອງເຈົ້າຈະເລີນຂຶ້ນ
7 ເຖິງແມ່ນການເລີ່ມຕົ້ນຂອງເຈົ້າຈະເລັກນ້ອຍ
ແຕ່ຕໍ່ໄປປາຍໆຈະໃຫຍ່ຫລາຍ
8 ຂ້ອຍຂໍຮ້ອງ ໃຫ້ເຈົ້າຖາມຄົນບູຮານເບິ່ງ
ແລະຄິດເບິ່ງວ່າ ບັນພະບູລຸດຄົ້ນພົບສິ່ງໃດແດ່
9 (ເພາະສ່ວນເຮົາຄືເກີດມື້ວານນີ້ ຈະຮູ້ຫຍັງກໍບໍ່ໄດ້
ເພາະວັນຄືນຂອງເຮົາເທິງແຜ່ນດິນໂລກປຽບເໝືອນເງົາ)
10 ພວກເຂົາຈະບໍ່ສອນເຈົ້າ ແລະບອກເຈົ້າ
ແລະກ່າວຄຳຈາກໃຈຂອງພວກເຂົາບໍ
11 ເຄືອຫວາຍຈະປົ່ງຂຶ້ນໃນບ່ອນທີ່ບໍ່ມີຕົມໄດ້ບໍ
ຕົ້ນອໍ້ຈະງອກງາມໃນບ່ອນທີ່ບໍ່ມີນໍ້າໄດ້ບໍ
12 ຂະນະທີ່ມີດອກຍັງບໍ່ໄດ້ຕັດລົງ
ມັນກໍຫ່ຽວແຫ້ງໄປກ່ອນຕົ້ນໄມ້ອື່ນໆ
13 ທາງຂອງບັນດາຜູ້ທີ່ລືມພຣະເຈົ້າກໍເປັນຢ່າງນັ້ນແຫລະ
ຄວາມຫວັງຂອງຄົນໜ້າຊື່ໃຈຄົດຈະພິນາດໄປ
14 ສິ່ງທີ່ພວກເຂົາໄວ້ໃຈຈະຫັກສະບັ້ນ

ແລະສິ່ງທີ່ພວກເຂົາວາງໃຈຈະຄືໃຍແມງມຸມ
15 ພວກເຂົາເພິ່ງເຮືອນຂອງຕົນ ແຕ່ມັນທົນບໍ່ໄຫວ
ພວກເຂົາຍຶດມັນໄວ້ ແຕ່ມັນກໍບໍ່ທົນຢູ່
16 ພວກມັນຂຽວສົດຢູ່ຕໍ່ໜ້າດວງອາທິດ
ແລະກິ່ງຂອງມັນກໍແຜ່ອອກໄປເທິງສວນຂອງມັນ
17 ຮາກຂອງມັນເລືອໄປເກາະກອງຫີນ
ແລະຢັ່ງລົງໄປໃນຫລືບກ້ອນຫີນ
18 ຖ້າພຣະອົງທຳລາຍມັນໄປຈາກບ່ອນຂອງມັນແລ້ວ
ບ່ອນນັ້ນຈະປະຕິເສດວ່າ ‘ຂ້ອຍບໍ່ເຄີຍເຫັນເຈົ້າ’
19 ເບິ່ງແມ ນີ້ເປັນຄວາມຊື່ນບານແຫ່ງທາງຂອງພວກເຂົາ
ແລະຜູ້ອື່ນຈະງອກອອກມາຈາກດິນ
20 ພຣະເຈົ້າຈະບໍ່ໄດ້ປະຖິ້ມຄົນດີຮອບຄອບ
ຫລືຄ້ຳຊູຜູ້ເຮັດຄວາມຊົ່ວຮ້າຍ
21 ພຣະອົງຍັງຈະໃຫ້ປາກຂອງເຈົ້າຊົມຊື່ນຍິນດີດ້ວຍ
ແລະເຮັດໃຫ້ຮີມປາກຂອງເຈົ້າໂຫ່ຮ້ອງສະເໝີ
22 ຄົນເຫລົ່ານັ້ນທີ່ກຽດຊັງເຈົ້າຈະຫົ່ມຄວາມອັບອາຍ
ແລະບ່ອນອາໄສຂອງຄົນຊົ່ວຈະບໍ່ມີຕໍ່ໄປອີກເລີຍ”

# ບົດທີ 9

## ໂຢບຍອມຮັບວ່າເປັນຄົນບາບ

1 ແລ້ວໂຢບຕອບວ່າ
2 “ຈິງແທ້ ຂ້ອຍຮູ້ວ່າເປັນຢ່າງນັ້ນ
ແຕ່ຄົນເຮົາຈະຊອບທຳຕໍ່ໜ້າພຣະພັກພຣະເຈົ້າໄດ້ຢ່າງໃດ
3 ຖ້າຄົນໜຶ່ງຄົນໃດປາດຖະໜາຈະໂຕ້ແຍ້ງກັບພຣະອົງ
ໃນພັນເທື່ອຜູ້ນັ້ນກໍຕອບພຣະອົງບໍ່ໄດ້ຈັກເທື່ອດຽວ
4 ພຣະອົງສະຫລາດຢູ່ໃນພຣະໄທ ແລະພຣະກຳລັງກໍແຂງແຮງ
ຜູ້ໃດເຄີຍໄດ້ຕໍ່ສູ້ກັບພຣະອົງ ແລະໄດ້ຮັບໄຊຊະນະບໍ
5 ພຣະອົງຜູ້ໄດ້ເຄື່ອນຍ້າຍພູເຂົາ ແລະພູເຂົາທັງຫລາຍກໍບໍ່ຮູ້
ເມື່ອພຣະອົງໄດ້ລົ້ມມັນດ້ວຍພຣະພິໂລດຂອງພຣະອົງ
6 ຜູ້ໄດ້ສັ່ນແຜ່ນດິນໂລກໃຫ້ອອກຈາກບ່ອນຂອງມັນ
ແລະເສົາຂອງມັນກໍສັ່ນສະເທືອນ
7 ຜູ້ໄດ້ບັນຊາດວງອາທິດ ແລະມັນບໍ່ຂຶ້ນ
ຜູ້ໄດ້ຕີຕາປະທັບເກັບບັນດາດວງດາວໄວ້

8 ຜູ້ໄດ້ຂຶງຟ້າສະຫວັນອອກແຕ່ພຣະອົງດຽວ
ແລະໄດ້ຢຽບຄື້ນທະເລ
9 ຜູ້ໄດ້ສ້າງໝູ່ດາວແຂ້ ແລະໝູ່ດາວໄຖ
ໝູ່ດາວລູກໄກ່ ແລະໝູ່ດາວທິດໃຕ້
10 ຜູ້ໄດ້ກະທຳສິ່ງໃຫຍ່ເຫລືອທີ່ຈະເຂົ້າໃຈໄດ້
ແລະການອັດສະຈັນຢ່າງນັບບໍ່ຖ້ວນ
11 ເບິ່ງແມ ພຣະອົງໄດ້ຜ່ານຂ້ອຍໄປ ແລະຂ້ອຍບໍ່ໄດ້ເຫັນພຣະອົງ
ພຣະອົງໄດ້ຜ່ານກາຍໄປ ແລະຂ້ອຍບໍ່ ໄດ້ສັງເກດເຫັນ
12 ພຣະອົງໄດ້ເອົາໄປ ໃຜຈະຫ້າມພຣະອົງໄດ້
ໃຜຈະທູນພຣະອົງວ່າ ‘ພຣະອົງໄດ້ກະທຳຫຍັງຫັ້ນ’
13 ພຣະເຈົ້າຈະບໍ່ໄດ້ຫັນພຣະພິໂລດຂອງພຣະອົງກັບ
ຕໍ່ພຣະອົງ ພວກສະໝຸນຂອງຄວາມຈອງຫອງຕ້ອງກາບຢູ່
14 ແລ້ວຂ້ອຍຈະຕອບພຣະອົງໄດ້ຢ່າງໃດ
ຈະເລືອກຖ້ອຍຄຳຫຍັງມາໂຕ້ຕອບພຣະອົງ
15 ເຖິງວ່າຂ້ອຍຊອບທຳ ຂ້ອຍກໍຕອບພຣະອົງບໍ່ໄດ້
ຂ້ອຍຈະຕ້ອງຂໍພຣະກະລຸນາຕໍ່ຜູ້ພິພາກສາຂອງຂ້ອຍ
16 ຖ້າຂ້ອຍຮ້ອງທູນຕໍ່ພຣະອົງ ແລະພຣະອົງໄດ້ຕອບຂ້ອຍ
ຂ້ອຍຈະບໍ່ເຊື່ອວ່າພຣະອົງໄດ້ຟັງສຽງຂອງຂ້ອຍ
17 ເພາະພຣະອົງທຸບຕີຂ້ອຍດ້ວຍພາຍຸ
ແລະເພີ່ມທະວີບາດແຜຂອງຂ້ອຍໂດຍບໍ່ມີເຫດຜົນ
18 ພຣະອົງຈະບໍ່ໃຫ້ຂ້ອຍຫາຍໃຈໄດ້
ແຕ່ຕື່ມຄວາມຂົມຂື່ນໃຫ້ຂ້ອຍຈົນເຕັມ
19 ຖ້າຂ້ອຍກ່າວເຖິງການລອງກຳລັງ ກໍເບິ່ງພຣະອົງແມ
ຖ້າເປັນເລື່ອງການພິພາກສາ ໃຜຈະນັດເວລາໃຫ້ຂ້ອຍສູ້ຄະດີໄດ້
20 ຖ້າຂ້ອຍອ້າງວ່າຕົວຊອບທຳ ປາກຂອງຂ້ອຍຈະກ່າວໂທດຂ້ອຍ
ຖ້າຂ້ອຍອ້າງວ່າຕົວດີຮອບຄອບ ພຣະອົງຈະພິສູດວ່າຂ້ອຍບົກຜ່ອງ
21 ເຖິງແມ່ນຂ້ອຍດີຮອບຄອບ ຂ້ອຍກໍບໍ່ເຂົ້າໃຈຕົວຂ້ອຍເອງ
ຂ້ອຍຈະກຽດຊັງຊີວິດຂອງຂ້ອຍ
22 ສັບພະທຸກສິ່ງກໍຄືກັນໝົດ ເພາະສະນັ້ນ ຂ້ອຍຈຶ່ງວ່າ
‘ພຣະອົງໄດ້ທຳລາຍທັງຄົນດີຮອບຄອບ ແລະຄົນຊົ່ວ’
23 ເມື່ອໄພພິບັດນຳຄວາມຕາຍມາໂດຍໄວ
ພຣະອົງໄດ້ເຍາະເຍີ້ຍຄວາມລຳບາກຍາກເຂັນຂອງຜູ້ບໍ່ມີຄວາມຜິດ
24 ແຜ່ນດິນໂລກນີ້ໄດ້ມອບໄວ້ໃນມືຂອງຄົນຊົ່ວ

ພຣະອົງໄດ້ປິດໜ້າບັນດາຜູ້ພິຈາລະນາໂລກ
ຖ້າບໍ່ແມ່ນພຣະອົງ ແລ້ວແມ່ນໃຜ
25 'ວັນທັງຫລາຍຂອງຂ້ານ້ອຍໄວກວ່ານັກແລ່ນ
ມັນພົ້ນໄປ ມັນບໍ່ເຫັນສິ່ງດີຫຍັງ
26 ມັນຜ່ານໄປຄືກັບເຮືອໄວ
ດັ່ງນົກອິນຊີບິນລົງມາຈັບເຫຍື່ອ
27 ຖ້າຂ້ານ້ອຍວ່າ "ຂ້ອຍຈະລືມຄຳຮ້ອງທຸກຂອງຂ້ອຍ
ຂ້ອຍຈະຖິ້ມໜ້າເສົ້າຂອງຂ້ອຍ ແລະຈະເບີກບານ"
28 ຂ້ານ້ອຍເກີດຢ້ານກົວບັນດາຄວາມທຸກຂອງຂ້ານ້ອຍ
ເພາະຂ້ານ້ອຍຮູ້ວ່າພຣະອົງຈະບໍ່ຖືວ່າຂ້ານ້ອຍບໍ່ມີຄວາມຜິດ
29 ຖ້າຂ້ານ້ອຍຊົ່ວຊ້າ
ເຫດໃດຂ້ານ້ອຍຈຶ່ງເສຍແຮງເປົ່າໆຢ່າງນັ້ນ
30 ຖ້າຂ້ານ້ອຍຊຳລະຕົວຂອງຂ້ານ້ອຍດ້ວຍນໍ້າຈາກຫິມະ
ແລະລ້າງມືຂອງຂ້ານ້ອຍດ້ວຍນໍ້າຢາ
31 ພຣະອົງຍັງຈະໄດ້ຈຸ່ມຂ້ານ້ອຍລົງໄປໃນຂຸມ
ແມ່ນເສື້ອຜ້າຂອງຂ້ານ້ອຍຈະກຽດຊັງຂ້ານ້ອຍ'
32 ພຣະອົງບໍ່ແມ່ນມະນຸດຄືຂ້ອຍ ທີ່ຂ້ອຍຈະຕອບພຣະອົງ
ຄືເຮົາຈະມາສູ້ຄະດີນຳກັນ
33 ບໍ່ມີຄົນກາງລະຫວ່າງເຮົາ
ຜູ້ຊຶ່ງຈະວາງມືເທິງເຮົາທັງສອງໄດ້
34 ຂໍໃຫ້ພຣະອົງໄດ້ນຳໄມ້ແສ້ໄປຈາກຂ້ອຍ
ແລະຂໍຢ່າໃຫ້ຄວາມໂກດຮ້າຍຈາກພຣະອົງເຮັດໃຫ້ຂ້ອຍຢ້ານກົວຫລາຍ
35 ແມ່ນຂ້ອຍຈະເວົ້າ ແລະບໍ່ຢ້ານກົວພຣະອົງ
ແຕ່ໃຈຈິງຂອງຂ້ອຍບໍ່ເປັນຢ່າງນັ້ນ"

# ບົດທີ 10

## ໂຢບສິ້ນຫວັງ ເພາະເຫດສະພາບຂອງຕົນ

1 "ຈິດໃຈຂ້ອຍເບື່ອຊີວິດຂອງຂ້ອຍ
ຂ້ອຍຈະຮ້ອງທຸກຢູ່ບໍ່ຢຸດ ຂ້ອຍຈະເວົ້າດ້ວຍຈິດໃຈຂົມຂື່ນຂອງຂ້ອຍ
2 ຂ້ອຍຈະທູນພຣະເຈົ້າວ່າ 'ຂໍຢ່າໄດ້ກ່າວໂທດຂ້ານ້ອຍ
ຂໍໃຫ້ຂ້ານ້ອຍຮູ້ວ່າເຫດໃດພຣະອົງໄດ້ໂຕ້ແຍ້ງກັບຂ້ານ້ອຍ
3 ພຣະອົງໄດ້ເຫັນດີແລ້ວບໍທີ່ຈະບີບບັງຄັບ
ທີ່ຈະໝິ່ນປະໝາດສິ່ງທີ່ອອກມາຈາກພຣະຫັດຂອງພຣະອົງ

ແລະໄດ້ໂຜດແຜນການຂອງຄົນຊົ່ວ
4 ພຣະອົງມີພຣະເນດເໝືອນຕາຄົນບໍ
ພຣະອົງໄດ້ເຫັນເໝືອນມະນຸດເຫັນບໍ
5 ວັນຂອງພຣະອົງເໝືອນວັນຂອງມະນຸດບໍ
ປີຂອງພຣະອົງເໝືອນວັນຄືນຂອງຄົນເຮົາບໍ
6 ທີ່ພຣະອົງໄດ້ຄອຍຖ້າຈັບຄວາມຊົ່ວຊ້າຂອງຂ້ານ້ອຍ
ແລະຄົ້ນຫາບາບຂອງຂ້ານ້ອຍ
7 ແມ່ນພຣະອົງຮູ້ວ່າຂ້ານ້ອຍບໍ່ໄດ້ເປັນຄົນຊົ່ວ
ແລະບໍ່ມີໃຜຊ່ວຍໃຫ້ພົ້ນອອກຈາກພຣະຫັດຂອງພຣະອົງໄດ້
8 ພຣະຫັດຂອງພຣະອົງ ໄດ້ປັ້ນ ແລະສ້າງຂ້ານ້ອຍ
ເຖິງປານນັ້ນພຣະອົງໄດ້ຫັນມາທຳລາຍຂ້ານ້ອຍ
9 ຂໍໄດ້ລະນຶກວ່າພຣະອົງໄດ້ສ້າງຂ້ານ້ອຍດັ່ງດິນໜຽວ
ພຣະອົງຈະໄດ້ນຳຂ້ານ້ອຍໃຫ້ກັບເປັນຂີ້ຝຸ່ນດິນອີກບໍ
10 ພຣະອົງບໍ່ໄດ້ຖອກຂ້ານ້ອຍອອກເໝືອນນ້ຳນົມ
ແລະເຮັດໃຫ້ຂ້ານ້ອຍແຂງເໝືອນເນີຍແຂງບໍ
11 ພຣະອົງໄດ້ເອົາເນື້ອໜັງຫົ່ມຂ້ານ້ອຍໄວ້
ແລະໄດ້ສານຂ້ານ້ອຍດ້ວຍກະດູກ ແລະເສັ້ນເອັນ
12 ພຣະອົງໄດ້ປະທານຊີວິດ ແລະຄວາມເມດຕາແກ່ຂ້ານ້ອຍ
ແລະຄວາມດູແລຮັກສາຂອງພຣະອົງໄດ້ສະຫງວນຈິດວິນຍານຂ້ານ້ອຍໄວ້
13 ແຕ່ສິ່ງຕໍ່ໄປນີ້ພຣະອົງໄດ້ເຊື່ອງໄວ້ໃນພຣະໄທຂອງພຣະອົງ
ຂ້ານ້ອຍຮູ້ວ່ານີ້ເປັນພຣະປະສົງຂອງພຣະອົງ
14 ຖ້າຂ້ານ້ອຍເຮັດບາບ ພຣະອົງໄດ້ໝາຍຂ້ານ້ອຍໄວ້
ແລະບໍ່ໄດ້ປ່ອຍຕົວຂ້ານ້ອຍໃຫ້ພົ້ນໂທດຄວາມຊົ່ວຊ້າຂອງຂ້ານ້ອຍ
15 ຖ້າຂ້ານ້ອຍຊົ່ວຮ້າຍ ວິບັດແກ່ຂ້ານ້ອຍ ຖ້າຂ້ານ້ອຍຊອບທຳ
ຂ້ານ້ອຍຍັງເງີຍຫົວຂອງຂ້ານ້ອຍຂຶ້ນບໍ່ໄດ້
ຂ້ານ້ອຍເຕັມດ້ວຍຄວາມໄຮ້ກຽດ ສະນັ້ນຂໍເບິ່ງຄວາມທຸກໃຈຂອງຂ້ານ້ອຍ
16 ໄພພິບັດຕ່າງໆເພີ່ມຫລາຍຂຶ້ນ
ພຣະອົງຈະໄດ້ໄລ່ລ້າຂ້ານ້ອຍເໝືອນໂຕສິງທີ່ໂຫດຮ້າຍ
ແລະໄດ້ເຮັດການອັດສະຈັນຕໍ່ສູ້ຂ້ານ້ອຍອີກ
17 ພຣະອົງໄດ້ຟື້ນພະຍານຂອງພຣະອົງປັກປຳຂ້ານ້ອຍໃໝ່
ແລະໄດ້ເພີ່ມຄວາມຮ້ອນພຣະໄທຂອງພຣະອົງໃນຂ້ານ້ອຍ
ພຣະອົງໄດ້ນຳກອງທັບຫລາຍກອງມາຕໍ່ສູ້ຂ້ານ້ອຍ
18 ເຫດໃດພຣະອົງໄດ້ນຳຂ້ານ້ອຍອອກມາຈາກທ້ອງແມ່

ບໍ່ດັ່ງນັ້ນ ຂ້ານ້ອຍຄົງຕາຍກ່ອນຕາໃດໆໄດ້ເຫັນຂ້ານ້ອຍ
19 ຄືກັບວ່າຂ້ານ້ອຍບໍ່ໄດ້ເກີດມາ
ຂ້ານ້ອຍຄົງຖືກນໍາຈາກທ້ອງແມ່ໄປເຖິງຂຸມຝັງສົບແລ້ວ
20 ວັນຄືນຊີວິດຂອງຂ້ານ້ອຍມີແຕ່ໜ້ອຍດຽວບໍ່ແມ່ນບໍ
ຂໍຢຸດເຖີດ ຂໍໃຫ້ຂ້ານ້ອຍຢູ່ລໍາພັງ ເພື່ອຂ້ານ້ອຍຈະຊື່ນໃຈອີກແດ່
21 ກ່ອນທີ່ຂ້ານ້ອຍຈະໄປສູ່ບ່ອນທີ່ຂ້ານ້ອຍບໍ່ກັບ
ເຖິງແຜ່ນດິນແຫ່ງຄວາມມືດ ແລະເງົາມັດຈຸລາດ
22 ແຜ່ນດິນຂອງຄວາມມືດທຶບດັ່ງຕົວຄວາມມືດ
ເປັນແຜ່ນດິນຂອງເງົາມັດຈຸລາດ ບໍ່ມີລະບຽບ
ແລະຄວາມສະຫວ່າງເປັນເໝືອນຄວາມມືດ'"

# ບົດທີ 11

## ໂສຟາວ່າໂຢບເວົ້າຂີ້ຕົວະ ແລະເປັນຄົນໜ້າຊື່ໃຈຄົດ

1 ແລ້ວໂຊຟາຊາວນາອາມາຕອບວ່າ
2 "ຄວນທີ່ຈະຟັງຖ້ອຍຄໍາໂດຍບໍ່ມີໃຜຕອບບໍ
ແລະຄົນທີ່ເວົ້າຫລາຍຄວນຈະນັບວ່າຊອບທໍາບໍ
3 ຄວນທີ່ຄໍາເວົ້າຂີ້ຕົວະຂອງເຈົ້າເຮັດໃຫ້ຄົນນິ້ງ
ແລະເມື່ອເຈົ້າເຍາະເຍີ້ຍ ບໍ່ຄວນມີຜູ້ໃດເຮັດໃຫ້ເຈົ້າອັບອາຍບໍ
4 ເພາະເຈົ້າວ່າ 'ຄໍາສອນຂອງຂ້ອຍບໍລິສຸດ
ແລະຂ້ອຍກໍສະອາດໃນສາຍພຣະເນດພຣະເຈົ້າ'
5 ແຕ່ ໂອ ໃຜຈະໃຫ້ພຣະເຈົ້າກ່າວ
ແລະເປີດຮີມພຣະໂອດຂອງພຣະອົງກ່າວກັບເຈົ້າ
6 ໃຜຈະໃຫ້ພຣະອົງໄດ້ສະແດງເຄັດລັບຂອງສະຕິປັນຍາໃຫ້ເຈົ້າ
ເພາະຄວາມເຂົ້າໃຈຂອງພຣະອົງເຫລືອທີ່ຈະເຂົ້າໃຈໄດ້
ຈົ່ງຮູ້ວ່າພຣະເຈົ້າໄດ້ເອີ້ນຮ້ອງຈາກເຈົ້າໜ້ອຍກວ່າຄວາມຊົ່ວຊ້າຂອງເຈົ້າຫລາຍຂໍ້
7 ເຈົ້າຈະຮູ້ເຫັນສະພາບຂອງພຣະເຈົ້າໄດ້ບໍ
ເຈົ້າຮູ້ເຫັນອົງຜູ້ມີລິດອໍານາດໄດ້ໝົດບໍ
8 ມັນສູງເທົ່າຟ້າສະຫວັນ ເຈົ້າຈະເຮັດຫຍັງໄດ້
ເລິກກວ່ານະລົກ ເຈົ້າຈະຮູ້ຫຍັງໄດ້
9 ວັດແທກເບິ່ງກໍຍາວກວ່າໂລກ
ແລະກວ້າງກວ່າທະເລ
10 ຖ້າພຣະອົງໄດ້ຜ່ານໄປ ແລະຂັງຄຸມຂັງ
ແລະຊົງເອີ້ນມາຊຸມນຸມກັນ ໃຜຈະຂັດຂວາງພຣະອົງໄດ້

11 ເພາະພຣະອົງຮູ້ຄົນບໍ່ມີຄ່າ ເມື່ອພຣະອົງໄດ້ເຫັນຄວາມຊົ່ວຮ້າຍ
ພຣະອົງຈະບໍ່ໄດ້ພິຈາລະນາບໍ
12 ແຕ່ຄົນບໍ່ມີຄ່າຢາກສະຫລາດ
ເຖິງແມ່ນວ່າມະນຸດເກີດມາເໝືອນລູກລາປ່າ
13 ຖ້າເຈົ້າຕຽມໃຈຂອງເຈົ້າໄວ້
ແລະເຈົ້າຢຽດມືຂອງເຈົ້າອອກໄປຫາພຣະອົງ
14 ຖ້າຄວາມຊົ່ວຊ້າຢູ່ໃນມືຂອງເຈົ້າ ຈົ່ງຖິ້ມໄປໃຫ້ໄກ
ແລະຢ່າໃຫ້ຄວາມຊົ່ວຮ້າຍອາໄສຢູ່ໃນເຕັນຂອງເຈົ້າ
15 ແລ້ວແທ້ຈິງ ເຈົ້າຈະເງີຍໜ້າຂຶ້ນໂດຍປາດສະຈາກຕຳໜິ
ເຈົ້າຈະໝັ້ນຄົງ ແລະບໍ່ຕ້ອງຢ້ານກົວ
16 ເພາະເຈົ້າຈະລືມຄວາມທຸກຍາກຂອງເຈົ້າ
ເຈົ້າຈະຈົດຈຳໄດ້ເໝືອນນໍ້າທີ່ໄດ້ໄຫລຜ່ານພົ້ນໄປ
17 ແລ້ວຊີວິດຂອງເຈົ້າຈະສຸກໃສຫລາຍກວ່າເວລາກາງເວັນ
ເຈົ້າຈະສ່ອງແສງເໝືອນຕອນເຊົ້າ
18 ແລະເຈົ້າຈະຮູ້ສຶກໝັ້ນຄົງ ເພາະມີຄວາມຫວັງ ເອີ
ເຈົ້າຈະກວາດສາຍຕາເບິ່ງສັບພະທຸກສິ່ງ ແລະນອນພັກຢ່າງປອດໄພ
19 ເຈົ້າຈະນອນລົງ ແລະບໍ່ມີໃຜເຮັດໃຫ້ເຈົ້າຢ້ານກົວ
ເອີ ຄົນເປັນຈຳນວນຫລາຍຈະມາອ້ອນວອນຂໍຄວາມຊ່ວຍເຫລືອຈາກເຈົ້າ
20 ແຕ່ວ່າຕາຂອງຄົນຊົ່ວຮ້າຍຈະມືດມົວ ພວກເຂົາຈະຫລີກໜີບໍ່ໄດ້
ແລະຄວາມຫວັງຂອງພວກເຂົາຈະເໝືອນກັບຄວາມຕາຍນັ້ນເອງ”

# ບົດທີ 12

## ໂຢບຕອບ ແລະວ່າກ່າວຄວາມຖ່ອຍຮ້າຍຂອງເພື່ອນໆ

1 ແລ້ວໂຢບຕອບວ່າ
2 “ບໍ່ຕ້ອງສົງໄສເລີຍທີ່ເຈົ້າທັງຫລາຍເປັນສຽງຂອງປະຊາຊົນ
ແລະສະຕິປັນຍາຈະຕາຍໄປພ້ອມກັບເຈົ້າ
3 ແຕ່ຂ້ອຍກໍມີຄວາມເຂົ້າໃຈຄືກັບເຈົ້າ ຂ້ອຍບໍ່ດີກວ່າເຈົ້າ ເອີ
ເລື່ອງຢ່າງນີ້ໃຜຈະບໍ່ຮູ້
4 ຂ້ອຍເປັນເໝືອນຜູ້ທີ່ໃຫ້ເພື່ອນບ້ານຊົມຊື່ນຍິນດີເຍາະເຍີ້ຍ
ຜູ້ຮ້ອງທູນພຣະເຈົ້າ ແລະພຣະອົງໄດ້ຕອບ
ຄົນດີຮອບຄອບອັນຊອບທຳເປັນບ່ອນໃຫ້ພວກເຂົາຫົວຂວັນ
5 ໃນຄວາມຄິດຂອງຜູ້ທີ່ຢູ່ຢ່າງສະບາຍ
ຜູ້ມີຕີນພ້ອມທີ່ຈະພາດເໝືອນຕະກຽງທີ່ຖືກໝິ່ນປະໝາດ

6 ເຕັນຂອງໂຈນກໍຮັ່ງມີ ແລະບຸກຄົນທີ່ຍົວະເຍົ້າພຣະເຈົ້າກໍໝັ້ນຄົງ
ພຣະເຈົ້າໄດ້ນຳຂອງຫລວງຫລາຍມາສູ່ມືຂອງພວກເຂົາ
7 ແຕ່ຂໍຖາມສັດເດຍລະສານ ແລະມັນຈະສອນເຈົ້າ
ຖາມນົກໃນອາກາດເບິ່ງ ແລະມັນຈະບອກເຈົ້າ
8 ຫລືເວົ້າກັບແຜ່ນດິນໂລກ ແລະມັນຈະສອນເຈົ້າ
ແລະປາທະເລຈະປະກາດແກ່ເຈົ້າ
9 ໃນບັນດາສິ່ງເຫລົ່ານີ້ມີສິ່ງໃດທີ່ບໍ່ຮູ້ວ່າພຣະຫັດຂອງພຣະຜູ້ເປັນເຈົ້າ
ໄດ້ກະທຳໃຫ້ເປັນໄປຢ່າງນັ້ນ
10 ຈິດໃຈຂອງສິ່ງທີ່ມີຊີວິດທຸກຢ່າງຢູ່ໃນພຣະຫັດຂອງພຣະອົງ
ທັງລົມຫາຍໃຈຂອງມະນຸດທັງປວງ
11 ຫູທົດລອງຖ້ອຍຄຳບໍ່ແມ່ນບໍ
ແລະເພດານປາກຊີມລົດອາຫານບໍ່ແມ່ນບໍ
12 ສະຕິປັນຍາຢູ່ກັບຄົນມີອາຍຸຫລາຍ
ແລະອາຍຸຍືນຍາວເຮັດໃຫ້ເກີດຄວາມເຂົ້າໃຈ
13 ສະຕິປັນຍາ ແລະລິດທານຸພາບຢູ່ກັບພຣະເຈົ້າ
ພຣະອົງມີຄຳແນະນຳ ແລະຄວາມເຂົ້າໃຈ
14 ເບິ່ງແມ ພຣະອົງໄດ້ມ້າງລົງ ແລະບໍ່ມີຜູ້ໃດສ້າງຂຶ້ນໃໝ່ໄດ້
ພຣະອົງໄດ້ກັກຂັງມະນຸດຄົນໜຶ່ງໄວ້ ແລະບໍ່ມີຜູ້ໃດເປີດໄດ້
15 ພຣະອົງໄດ້ຕັນນໍ້າໄວ້ ແລະມັນກໍແຫ້ງໄປ
ດັ່ງນັ້ນ ພຣະອົງໄດ້ສົ່ງມັນອອກໄປ ແລະມັນກໍຖ້ວມແຜ່ນດິນ
16 ພຣະກຳລັງ ແລະພຣະສະຕິປັນຍາຢູ່ກັບພຣະອົງ
ຜູ້ທີ່ຫລົງຜິດກັບຜູ້ທີ່ໃຫ້ຫລົງຜິດເປັນຂອງພຣະອົງ
17 ພຣະອົງໄດ້ນຳທີ່ປຶກສາໄປຕົວເປົ່າ
ແລະພຣະອົງໄດ້ກະທຳຜູ້ພິພາກສາໃຫ້ເປັນຄົນໂງ່
18 ພຣະອົງໄດ້ປົດບັນດາກະສັດລົງຈາກບັນລັງ
ແລະໄດ້ຜູກມັດແອວຂອງກະສັດເຫລົ່ານັ້ນດ້ວຍຜ້າຄາດແອວ
19 ພຣະອົງໄດ້ນຳເຈົ້າຊາຍໄປຕົວເປົ່າ
ແລະໄດ້ລົ້ມຜູ້ມີກຳລັງເສຍ
20 ພຣະອົງໄດ້ເອົາຄຳເວົ້າໄປຈາກຜູ້ທີ່ພວກເຂົາວາງໃຈ
ແລະໄດ້ນຳການພິຈາລະນາໄປຈາກພວກຜູ້ມີອາຍຸ
21 ພຣະອົງໄດ້ຖອກຄວາມອັບອາຍເທິງເຈົ້ານາຍ
ແລະໄດ້ກະທຳໃຫ້ຜູ້ທີ່ແຂງແຮງອ່ອນກຳລັງ
22 ພຣະອົງໄດ້ເປີດສິ່ງທີ່ເລິກອອກມາຈາກຄວາມມືດ

ແລະໄດ້ນຳເງົາມັດຈຸລາດມາສູ່ຄວາມສະຫວ່າງ
23 ພຣະອົງໄດ້ກະທຳໃຫ້ປະຊາຊາດໃຫຍ່ຂຶ້ນ
ແລະໄດ້ທຳລາຍ ພຣະອົງໄດ້ຂະຫຍາຍບັນດາປະຊາຊາດ
ແລະໄດ້ນຳພວກເຂົາທັງຫລາຍໃຫ້ແຕບລົງອີກ
24 ພຣະອົງໄດ້ນຳຄວາມເຂົ້າໃຈໄປຈາກຫົວໜ້າຊາວໂລກ
ແລະໄດ້ກະທຳໃຫ້ພວກເຂົາພະເນຈອນໄປໃນຖິ່ນແຫ້ງແລ້ງກັນດານ
ຊຶ່ງບໍ່ມີຫົນທາງ
25 ພວກເຂົາທັງຫລາຍງົມຢູ່ໃນຄວາມມືດ
ປາດສະຈາກຄວາມສະຫວ່າງ
ແລະພຣະອົງໄດ້ເຮັດໃຫ້ພວກເຂົາໂຊເຊເໝືອນຄົນເມົາ"

# ບົດທີ 13

## ໂຢບປ້ອງກັນຄວາມສັດຊື່ຂອງຕົນເອງ

1 "ເບິ່ງແມ ຕາຂອງຂ້ອຍໄດ້ເຫັນສິ່ງທັງໝົດນີ້ແລ້ວ
ຫູຂອງຂ້ອຍໄດ້ຍິນ ແລະເຂົ້າໃຈເລື່ອງນີ້ແລ້ວ
2 ສິ່ງໃດທີ່ເຈົ້າທັງຫລາຍຮູ້ ຂ້ອຍກໍຮູ້ດ້ວຍ
ຂ້ອຍບໍ່ດີກວ່າເຈົ້າ
3 ແຕ່ຂ້ອຍຈະຂໍທູນຕໍ່ອົງຜູ້ມີລິດອຳນາດ
ແລະປາດຖະໜາຈະສູ້ຄະດີຂອງຂ້ອຍກັບພຣະເຈົ້າ
4 ສ່ວນເຈົ້າ ເຈົ້າຖືກສາບດ້ວຍການຂີ້ຕົວະ
ເຈົ້າທັງປວງເປັນແພດທີ່ໃຊ້ບໍ່ໄດ້
5 ໂອ ເຈົ້າໜ້າຈະມິດງຽບຢູ່
ແລະຄວາມມິດງຽບນັ້ນຈະເປັນສະຕິປັນຍາຂອງເຈົ້າ
6 ບັດນີ້ ຂໍຟັງການຫາເຫດຜົນຂອງຂ້ອຍ
ແລະຂໍຟັງຄຳອ້ອນວອນຂອງຮີມປາກຂອງຂ້ອຍ
7 ເຈົ້າທັງຫລາຍຈະເວົ້າຊົ່ວຮ້າຍເພື່ອພຣະເຈົ້າບໍ
ແລະເວົ້າຄວາມບໍ່ຈິງເພື່ອພຣະອົງບໍ
8 ເຈົ້າທັງຫລາຍຈະສະແດງຄວາມເຂົ້າຂ້າງພຣະອົງບໍ
ເຈົ້າຈະວ່າຄວາມຝ່າຍພຣະເຈົ້າບໍ
9 ເມື່ອພຣະອົງໄດ້ຄົ້ນພົບເຈົ້າ ຈະດີແກ່ເຈົ້າບໍ
ຫລືເຈົ້າຈະເຍາະເຍີ້ຍພຣະອົງໄດ້ເໝືອນຜູ້ໜຶ່ງຜູ້ໃດເຍາະເຍີ້ຍມະນຸດບໍ
10 ພຣະອົງຈະໄດ້ລົງໂທດເຈົ້າທັງຫລາຍແທ້
ຖ້າເຈົ້າສະແດງຄວາມລຳອຽງຢ່າງລັບໆ

11 ລິດອຳນາດຂອງພຣະອົງຈະບໍ່ເຮັດໃຫ້ເຈົ້າຢ້ານກົວ
ແລະຄວາມໂກດຮ້າຍຕໍ່ພຣະອົງຈະບໍ່ຕົກເໜືອເຈົ້າຫລື
12 ຄວາມລະນຶກເຖິງທັງຫລາຍຂອງເຈົ້າເປັນເໝືອນຂີ້ເທົ່າ
ຮ່າງກາຍຂອງເຈົ້າເປັນແຕ່ກາຍດິນ
13 ຂໍຈົ່ງມິດສາ ແລະຂ້ອຍຈະເວົ້າ
ແລະແມ່ນຫຍັງຈະເກີດຂຶ້ນແກ່ຂ້ອຍ ກໍຂໍໃຫ້ເກີດທ້ອນ
14 ເຫດສັນໃດ ຂ້ອຍຈະຄາບເນື້ອໜັງຂອງຂ້ອຍໄວ້
ແລະສ່ຽງຊີວິດຂອງຂ້ອຍ
15 ເຖິງແມ່ນພຣະອົງໄດ້ປະຫານຂ້ອຍເສຍ ຂ້ອຍກໍຈະຍັງວາງໃຈໃນພຣະອົງ
ແຕ່ຂ້ອຍຈະຍັງຢືນຢັນທາງທັງຫລາຍຂອງຂ້ອຍຕໍ່ໜ້າພຣະພັກພຣະອົງ
16 ພຣະອົງຈະໄດ້ເປັນຄວາມພົ້ນຂອງຂ້ອຍດ້ວຍ
ເພາະຄົນໜ້າຊື່ໃຈຄົດຈະບໍ່ໄດ້ເຂົ້າມາຕໍ່ໜ້າເບື້ອງພຣະພັກພຣະອົງ
17 ຂໍຟັງຖ້ອຍຄຳຂອງຂ້ອຍຢ່າງລະມັດລະວັງ
ແລະໃຫ້ຄຳກ່າວຂອງຂ້ອຍຢູ່ໃນຫູຂອງເຈົ້າ
18 ເບິ່ງແມ ຂ້ອຍຕຽມຄະດີຂອງຂ້ອຍແລ້ວ
ຂ້ອຍຮູ້ວ່າ ຈະປາກົດວ່າຂ້ອຍບໍລິສຸດ
19 ໃຜນໍ ຈະສູ້ຄະດີກັບຂ້ອຍ ເພາະບັດນີ້
ຖ້າຂ້ອຍມິດງຽບຢູ່ ຂ້ອຍກໍຈະຕາຍ
20 ‘ຂໍໄດ້ປະທານສອງສິ່ງແກ່ຂ້ານ້ອຍ
ແລະຂ້ານ້ອຍຈະບໍ່ເຊື່ອງຕົວຈາກພຣະພັກພຣະອົງ
21 ຂໍໄດ້ຫົດພຣະຫັດໃຫ້ໄກຈາກຂ້ານ້ອຍ
ແລະຂໍຢ່າໃຫ້ຄວາມໂກດຮ້າຍຂອງພຣະອົງເຮັດໃຫ້ຂ້ານ້ອຍຢ້ານກົວ
22 ຂໍພຣະອົງເອີ້ນສາ ແລ້ວຂ້ານ້ອຍຈະທູນຕອບ
ຫລືຂໍໃຫ້ຂ້ານ້ອຍທູນ ແລະຂໍພຣະອົງໄດ້ຕອບແກ່ຂ້ານ້ອຍ
23 ບັນດາຄວາມຊົ່ວຊ້າ ແລະຄວາມຜິດບາບຂອງຂ້ານ້ອຍມີເທົ່າໃດ
ຂໍໄດ້ໂຜດໃຫ້ຂ້ານ້ອຍຮູ້ເຖິງການລະເມີດ ແລະບາບຂອງຂ້ານ້ອຍ
24 ເປັນຫຍັງພຣະອົງຈຶ່ງຫັນພຣະພັກໜີ
ແລະໄດ້ນັບວ່າຂ້ານ້ອຍເປັນສັດຕູຂອງພຣະອົງ
25 ພຣະອົງຈະໃຫ້ໃບໄມ້ທີ່ຖືກລົມພັດຫັກບໍ
ແລະຈະໄດ້ໄລ່ຕິດຕາມເຟືອງແຫ້ງບໍ
26 ເພາະພຣະອົງໄດ້ຈາລຶກສິ່ງຂົມຂື່ນຕໍ່ສູ້ຂ້ານ້ອຍ
ແລະໄດ້ກະທຳໃຫ້ຂ້ານ້ອຍຮັບໂທດຄວາມຊົ່ວຊ້າ
ທີ່ຂ້ານ້ອຍເຮັດເມື່ອຍັງໜຸ່ມໆຢູ່

27 ພຣະອົງໄດ້ເອົາໂສ້ມັດຕີນຂອງຂ້ານ້ອຍໄວ້
ແລະໄດ້ເຝົ້າເບິ່ງທາງທັງໝົດຂອງຂ້ານ້ອຍ
ພຣະອົງໄດ້ຈາລຶກເຄື່ອງໝາຍໄວ້ເທິງຝ່າຕີນຂອງຂ້ານ້ອຍ
28 ມະນຸດກໍຊຸດໂຊມໄປຄືຂອງເນົ່າ
ຄືເຄື່ອງແຕ່ງກາຍທີ່ໂຕມອດກິນ'"

# ບົດທີ 14

## ໂຢບຕອບສະຫາຍຂອງຕົນ

1 "'ມະນຸດທີ່ເກີດມາໂດຍຜູ້ຍິງກໍຢູ່ແຕ່ໜ້ອຍມື້
ແລະເຕັມໄປດ້ວຍຄວາມຫຍຸ້ງຍາກໃຈ
2 ພວກເຂົາອອກມາເໝືອນດອກໄມ້ ແລ້ວກໍຖືກຕັດໃຫ້ລົ້ມລົງ
ພວກເຂົາລີ້ໄປຄືເງົາ ແລະບໍ່ຢູ່ຕໍ່ໄປອີກ
3 ພຣະອົງໄດ້ທອດພຣະເນດເບິ່ງຄົນຢ່າງນີ້ບໍ
ແລະໄດ້ນຳຂ້ານ້ອຍມາໃນການພິພາກສາຂອງພຣະອົງບໍ
4 ໃຜຈະເອົາສິ່ງສະອາດອອກມາຈາກສິ່ງບໍ່ສະອາດໄດ້
ບໍ່ມີໃຜຈັກຄົນ
5 ວັນເວລາຂອງພວກເຂົາຖືກກຳນົດໄວ້ແລ້ວ
ແລະຈຳນວນເດືອນຂອງພວກເຂົາກໍຢູ່ກັບພຣະອົງ
ພຣະອົງໄດ້ກຳນົດຂອບເຂດຂອງພວກເຂົາບໍ່ໃຫ້ພວກເຂົາຜ່ານໄປໄດ້
6 ສະນັ້ນ ຂໍໄດ້ຫັນພຣະພັກໄປຈາກເຂົາ ແລະຍົກເລີກເສຍພຣະເຈົ້າຂ້າ
ເພື່ອໃຫ້ພວກເຂົາຊື່ນບານດ້ວຍວັນຂອງພວກເຂົາເໝືອນລູກຈ້າງ
7 ເພາະສຳລັບຕົ້ນໄມ້ກໍມີຄວາມຫວັງ ຖ້າມັນຖືກຕັດລົງ
ມັນກໍຈະແຕກໜໍ່ອີກ ແລະໜໍ່ອ່ອນຂອງມັນຈະບໍ່ຢຸດຍັ້ງ
8 ເຖິງຮາກຂອງມັນຈະແກ່ຢູ່ໃນດິນ
ແລະຕໍຂອງມັນຈະຕາຍຢູ່ໃນຂີ້ຝຸ່ນດິນ
9 ແຕ່ພໍໄດ້ກິ່ນອາຍຂອງນໍ້າ
ມັນຈະປົ່ງແລະແຕກກິ່ງອອກເໝືອນຕົ້ນໄມ້ອ່ອນ
10 ແຕ່ມະນຸດຕາຍ ແລະລົ້ມລົງ ເອີ
ມະນຸດສິ້ນລົມຫາຍໃຈ ແລະພວກເຂົາຢູ່ທີ່ໃດບໍ
11 ນໍ້າຂາດຈາກທະເລສາບໄປ
ແລະແມ່ນໍ້າກໍເຫືອດແຫ້ງໄປສັນໃດ
12 ສັນນັ້ນແຫລະ ມະນຸດກໍນອນລົງ ແລະບໍ່ລຸກຂຶ້ນອີກ ຈົນທ້ອງຟ້າບໍ່ມີ
ພວກເຂົາກໍບໍ່ຕື່ນຂຶ້ນ ແລະປຸກພວກເຂົາກໍບໍ່ໄດ້

13 ໂອ ຫາກພຣະອົງໄດ້ເຊື່ອງຂ້ານ້ອຍໄວ້ໃນແດນຄົນຕາຍກໍຈະດີ
ຢາກໃຫ້ພຣະອົງປົກປິດຂ້ານ້ອຍໄວ້ຈົນພຣະພິໂລດຂອງພຣະອົງພົ້ນໄປ
ຢາກຈະໃຫ້ພຣະອົງກຳນົດເວລາໃຫ້ຂ້ານ້ອຍ ແລະລະນຶກເຖິງຂ້ານ້ອຍ
14 ຖ້າມະນຸດຕາຍແລ້ວ ລາວຈະມີຊີວິດອີກບໍ
ຂ້ານ້ອຍຈະຄອຍຖ້າຢູ່ຕະຫລອດວັນປະຈຳການຂອງຂ້ານ້ອຍ
ຈົນກວ່າການປົດປ່ອຍຂອງຂ້ານ້ອຍຈະມາເຖິງ
15 ພຣະອົງຈະໄດ້ເອີ້ນ ແລະຂ້ານ້ອຍຈະທູນຕອບພຣະອົງ
ພຣະອົງຈະໄດ້ອາໄລອາວອນນຳສິ່ງທີ່ພຣະອົງໄດ້ສ້າງດ້ວຍພຣະຫັດຂອງພຣະອົງ
16 ແຕ່ພຣະອົງໄດ້ນັບບາດກ້າວຂອງຂ້ານ້ອຍ
ພຣະອົງບໍ່ໄດ້ຈ້ອງຈັບຜິດຂ້ານ້ອຍບໍ
17 ການລະເມີດຂອງຂ້ານ້ອຍນັ້ນໄດ້ໃສ່ໄວ້ໃນຖົງທີ່ປະທັບຕາໄວ້
ແລະພຣະອົງໄດ້ມັດຄວາມຊົ່ວຊ້າຂອງຂ້ານ້ອຍໄວ້
18 ແຕ່ພູເຂົາກໍທະລາຍລົງ ແລະພັງໄປ
ແລະກ້ອນຫີນກໍຖືກຍ້າຍໄປຈາກບ່ອນຂອງມັນ
19 ນ້ຳເຊາະຫີນໄປ
ພຣະອົງພັດພາສິ່ງຕ່າງໆທີ່ງອກຂຶ້ນຈາກຂີ້ຝຸ່ນດິນຂອງແຜ່ນດິນໂລກໄປ
ພຣະອົງໄດ້ທຳລາຍຄວາມຫວັງຂອງມະນຸດເຊັ່ນກັນ
20 ພຣະອົງໄດ້ຊະນະພວກເຂົາສະເໝີ ແລະພວກເຂົາກໍລ່ວງລັບໄປ
ພຣະອົງໄດ້ປ່ຽນໃບໜ້າຂອງພວກເຂົາ ແລະໄດ້ສົ່ງພວກເຂົາໄປ
21 ບັນດາລູກຊາຍຂອງພວກເຂົາໄດ້ຮັບກຽດ ແລະພວກເຂົາກໍບໍ່ຮູ້
ພວກເຂົາທັງຫລາຍຕົກຕ່ຳລົງ ແຕ່ພວກເຂົາບໍ່ຮູ້ບໍ່ເຫັນ
22 ພວກເຂົາຮູ້ສຶກພຽງຄວາມເຈັບໃນຮ່າງກາຍຂອງຕົນ
ແລະຈິດໃຈພວກເຂົາກໍຮ້ອງຄາງ'"

# ບົດທີ 15

## ເອລີຟັດກ່າວວ່າພວກຕົນມີຄວາມຮູ້ຫລາຍກວ່າໂຢບ

1 ແລ້ວ ເອລີຟັດ ຊາວ ເຕມານ ຕອບວ່າ
2 "ຄວນທີ່ຄົນມີປັນຍາຈະຕອບດ້ວຍຄວາມຮູ້ລົມໆແລ້ງໆບໍ
ແລະບັນຈຸລົມຕາວັນອອກໃຫ້ເຕັມທ້ອງ
3 ຄວນທີ່ພວກເຂົາຈະໂຕ້ແຍ້ງກັນໃນການເວົ້າອັນບໍ່ມີປະໂຫຍດ
ຫລືດ້ວຍຖ້ອຍຄຳຊຶ່ງບໍ່ໄດ້ຜົນບໍ
4 ແຕ່ເຈົ້າກຳລັງກຳຈັດຄວາມຢຳເກງ
ແລະຂັດຂວາງການອະທິຖານຕໍ່ພຣະພັກພຣະເຈົ້າ

5 ເພາະປາກຂອງເຈົ້າກ່າວຄວາມຊົ່ວຊ້າຂອງເຈົ້າ
ແລະເຈົ້າເລືອກເອົາລີ້ນຂອງຄົນສະຫລາດແກ່ມໂກງ
6 ປາກຂອງເຈົ້າກ່າວໂທດເຈົ້າເອງ ບໍ່ແມ່ນຂ້າພະເຈົ້າ
ແລະຮີມປາກຂອງເຈົ້າປັກປ້ຳເຈົ້າເອງ
7 ເຈົ້າເປັນມະນຸດຄົນທຳອິດທີ່ເກີດມາບໍ
ຫລືເຈົ້າເກີດມາກ່ອນໂນນພູບໍ
8 ເຈົ້າໄດ້ຟັງຄວາມເລິກລັບຂອງພຣະເຈົ້າບໍ
ແລະເຈົ້າຈຳກັດສະຕິປັນຍາໄວ້ສະເພາະຕົວເຈົ້າບໍ
9 ເຈົ້າຮູ້ຈັກຫຍັງແດ່ທີ່ພວກເຮົາບໍ່ຮູ້ນຳ
ເຈົ້າເຂົ້າໃຈຫຍັງແດ່ທີ່ບໍ່ກະຈ່າງແຈ້ງແກ່ເຮົາບໍ
10 ໃນພວກເຮົາມີຄົນຜົມຫງອກ
ແລະຄົນສູງອາຍຸແກ່ເຖົ້າຫລາຍກວ່າພໍ່ຂອງເຈົ້າ
11 ເຈົ້າເຫັນຄຳເລົ້າໂລມຂອງພຣະເຈົ້າກັບຄວາມອ່ອນຫວານທີ່ເຈົ້າໄດ້ຍິນແລ້ວ
ກໍບໍ່ພໍສຳລັບເຈົ້າບໍ
12 ເຫດໃດເຈົ້າຈຶ່ງປ່ອຍຕົວໄປຕາມໃຈ
ເປັນຫຍັງຕາຂອງເຈົ້າຈຶ່ງລຸກເປັນໄຟ
13 ຄືທີ່ເຈົ້າຫັນຈິດໃຈຂອງເຈົ້າຕໍ່ສູ້ພຣະເຈົ້າ
ແລະໃຫ້ຖ້ອຍຄຳຢ່າງນີ້ອອກຈາກປາກຂອງເຈົ້າ
14 ມະນຸດເປັນຫຍັງ ພວກເຂົາຈຶ່ງບໍລິສຸດໄດ້
ຫລືພວກເຂົາຜູ້ເກີດມາໂດຍຜູ້ຍິງເປັນຫຍັງ ພວກເຂົາຈຶ່ງຊອບທຳໄດ້
15 ເບິ່ງແມພຣະເຈົ້າບໍ່ໄດ້ວາງໃຈໃນຜູ້ບໍລິສຸດຂອງພຣະອົງ
ແລະ ຟ້າສະຫວັນກໍບໍ່ບໍລິສຸດໃນສາຍພຣະເນດຂອງພຣະອົງ
16 ແລ້ວມະນຸດ ຜູ້ດື່ມຄວາມຊົ່ວຊ້າເໝືອນດື່ມນ້ຳ ກໍໜ້າກຽດຊັງ
ແລະຊົ່ວຮ້າຍຫລາຍກວ່ານັ້ນເທົ່າໃດ
17 ຟັງຂ້ອຍເດີ້ ຂ້ອຍຈະສະແດງແກ່ເຈົ້າ
ສິ່ງໃດທີ່ຂ້ອຍໄດ້ເຫັນ ຂ້ອຍຈະກ່າວໃຫ້ເຈົ້າຟັງ
18 ສິ່ງທີ່ຄົນມີປັນຍາໄດ້ບອກກັນມາຕັ້ງແຕ່ບັນພະບູລຸດຂອງພວກເຂົາ
ແລະບໍ່ໄດ້ປິດບັງໄວ້
19 ຜູ້ທີ່ໄດ້ຮັບພະລາຊະທານແຜ່ນດິນແຕ່ພວກດຽວ
ແລະບໍ່ມີຄົນຕ່າງດ້າວຜ່ານໄປທ່າມກາງພວກເຂົາທັງຫລາຍ
20 ຄົນຊົ່ວທົນທຸກທໍລະມານຕະຫລອດອາຍຸຂອງພວກເຂົາ
ຕະຫລອດປີ ທັງປວງໄດ້ເຊື່ອງໄວ້ຈາກຜູ້ບີບບັງຄັບ
21 ສຽງທີ່ໜ້າຢ້ານກົວຢູ່ໃນຫູຂອງພວກເຂົາ

ຜູ້ທຳລາຍຈະມາເໜືອພວກເຂົາໃນຍາມຮັ່ງມີ
22 ພວກເຂົາບໍ່ເຊື່ອວ່າຕົນຈະກັບອອກມາຈາກຄວາມມືດ
ພວກເຂົາຈະຕ້ອງຕາຍດ້ວຍດາບ
23 ພວກເຂົາພະເນຈອນໄປເພື່ອຫາອາຫານ ກ່າວວ່າ 'ຢູ່ທີ່ໃດ'
ພວກເຂົາຮູ້ຢູ່ວ່າວັນຂອງຄວາມມືດຢູ່ພຽງແຕ່ເອື້ອມມື
24 ຄວາມທຸກໃຈ ແລະຄວາມແສນລະທົມໃຈຈະເຮັດໃຫ້ພວກເຂົາຢ້ານກົວ
ມັນຈະຊະນະພວກເຂົາ ເໝືອນຢ່າງກະສັດຕຽມພ້ອມແລ້ວສຳລັບການເສິກ
25 ເພາະພວກເຂົາໄດ້ຢຽດມືຂອງຕົນອອກຕໍ່ສູ້ພຣະເຈົ້າ
ແລະເພີ່ມກຳລັງເພື່ອຕໍ່ສູ້ອົງຜູ້ມີລິດອຳນາດ
26 ພວກເຂົາແລ່ນເຂົ້າໃສ່ພຣະອົງຢ່າງດື້ດຶງ
ພ້ອມກັບໂລ່ໜາໆ
27 ເພາະວ່າພວກເຂົາໄດ້ປົກຄຸມໜ້າຂອງຕົນດ້ວຍຄວາມອ້ວນຂອງຕົນແລ້ວ
ແລະຮວບຮວມໄຂມັນມາໄວ້ທີ່ບັ້ນແອວຂອງພວກເຂົາທັງຫລາຍ
28 ແລະໄດ້ອາໄສຢູ່ໃນຫົວເມືອງຮ້າງເປົ່າ ໃນເຮືອນຊຶ່ງບໍ່ມີຜູ້ອາໄສ
ຊຶ່ງໄດ້ກຳນົດໄວ້ໃຫ້ເປັນບ່ອນທີ່ມ້າງແລ້ວ
29 ພວກເຂົາຈະບໍ່ຮັ່ງມີ ແລະຊັບສົມບັດຂອງພວກເຂົາຈະບໍ່ໝັ້ນຄົງຢູ່
ແລະເຂົ້າຂອງຂອງພວກເຂົາຈະບໍ່ເພີ່ມພູນໃນແຜ່ນດິນ
30 ພວກເຂົາຈະໜີຈາກຄວາມມືດບໍ່ພົ້ນ ແປວໄຟຈະເຮັດໃຫ້ໜໍ່ຂອງເຂົາແຫ້ງໄປ
ແລະໂດຍລົມຫາຍໃຈພວກເຂົາຈະຕ້ອງຈາກໄປ
31 ຢ່າໃຫ້ພວກເຂົາວາງໃຈໃນຄວາມອວດອ້າງເປົ່າໆ
ມັນຈະຫລອກລວງຕົວພວກເຂົາເອງ
ເພາະຄວາມອວດອ້າງເປົ່າໆຈະເປັນສິ່ງຕອບແທນພວກເຂົາ
32 ການນັ້ນຈະສຳເລັດກ່ອນເວລາມັນຈະຕາຍ
ແລະກິ່ງຂອງມັນຈະບໍ່ຂຽວ
33 ພວກເຂົາຈະເປັນເໝືອນເຄືອອະງຸ່ນທີ່ໝາກອະງຸ່ນດິບຂອງມັນອອກໝົດ
ແລະເປັນດັ່ງຕົ້ນໝາກກອກເທດທີ່ປະຖິ້ມດອກບານຂອງມັນ
34 ເພາະວ່າພວກຄົນໜ້າຊື່ໃຈຄົດນັ້ນຈະເປັນໝັນ
ແລະໄຟຈະເຜົາຜານເຕັນແຫ່ງສິນບົນ
35 ພວກເຂົາທັງຫລາຍຕັ້ງທ້ອງຄວາມຊົ່ວ ແລະເກີດຄວາມຮ້າຍອອກມາ
ແລະທ້ອງຂອງພວກເຂົາກໍຕຽມການຫລອກລວງ"

# ບົດທີ 16

## ໂຢບຈົ່ມເລື່ອງພຣະລາຊະກິດຂອງພຣະເຈົ້າ

1 ແລ້ວໂຢບຕອບວ່າ
2 "ຂ້ອຍເຄີຍໄດ້ຍິນເລື່ອງຢ່າງນີ້ມາຫລາຍແລ້ວ
ເຈົ້າທຸກຄົນເປັນຜູ້ເລົ້າໂລມທີ່ກວນໃຈ
3 ຄຳລົມໆແລ້ງໆຈະຈົບສິ້ນເມື່ອໃດໜໍ
ເຈົ້າເປັນຫຍັງໄປ ເຈົ້າຈຶ່ງຕອບຢ່າງນີ້
4 ຂ້ອຍກໍເວົ້າເໝືອນເຈົ້າທັງຫລາຍເວົ້າໄດ້ຄືກັນ ຖ້າຈິດໃຈເຈົ້າຢູ່ໃນຈິດໃຈຂອງຂ້ອຍ
ຂ້ອຍກໍອາດເວົ້າຖ້ອຍຄຳຕໍ່ສູ້ເຈົ້າທັງຫລາຍໄດ້ ແລະສັ່ນຫົວຂອງຂ້ອຍເຍີ້ຍເຈົ້າ
5 ຂ້ອຍຈະຊູກຳລັງຂອງເຈົ້າທັງຫລາຍດ້ວຍປາກຂອງຂ້ອຍກໍໄດ້
ແລະການເຄື່ອນໄຫວຂອງຮີມປາກຂອງຂ້ອຍ
ຈະລະງັບຄວາມເຈັບປວດຂອງເຈົ້າກໍໄດ້ດ້ວຍ
6 ຖ້າຂ້ອຍເວົ້າ ຄວາມເຈັບປວດຂອງຂ້ອຍກໍບໍ່ລະງັບ ແລະຖ້າຂ້ອຍມິດງຽບຢູ່
ຈະຊ່ວຍບັນເທົາຄວາມເຈັບປວດຂອງຂ້ອຍໄດ້ບໍ
7 ແຕ່ວ່າ ດຽວນີ້ພຣະເຈົ້າໄດ້ໃຫ້ຂ້ອຍເມື່ອຍຫລາຍ
ພຣະອົງໄດ້ທຳລາຍຄອບຄົວຂອງຂ້ອຍທັງໝົດ
8 ແລະພຣະອົງໄດ້ຈັບຂ້ອຍມັດໄວ້ ຊຶ່ງສະພາບນີ້ເປັນພະຍານປັກປ້ຳຂ້ອຍ
ແລະຄວາມຈອງຫອງຂອງຂ້ອຍກໍລຸກຂຶ້ນປັກປ້ຳຂ້ອຍ ມັນເປັນພະຍານໃສ່ໜ້າຂ້ອຍ
9 ພຣະອົງໄດ້ຈີກຂ້ອຍດ້ວຍພຣະພິໂລດຂອງພຣະອົງແລະໄດ້ກຽດຊັງຂ້ອຍ
ພຣະອົງໄດ້ຂົບແຂ້ວໃສ່ຂ້ອຍ ສັດຕູຂອງຂ້ອຍປິ້ນຕາຕໍ່ສູ້ຂ້ອຍ
10 ມີຄົນອ້າປາກໃສ່ຂ້ອຍ ພວກເຂົາຕົບແກ້ມປະຈານຂ້ອຍ
ພວກເຂົາສຸມຫົວກັນປັກປ້ຳຂ້ອຍ
11 ພຣະເຈົ້າໄດ້ມອບຂ້ອຍໃຫ້ແກ່ຄົນອະທຳ
ແລະໄດ້ໂຍນຂ້ອຍໄວ້ໃນມືຂອງຄົນຊົ່ວຮ້າຍ
12 ຂ້ອຍຢູ່ສະບາຍ ແລະພຣະອົງໄດ້ຫັກຂ້ອຍສະບັ້ນ ແລະຊຸກຄໍຂ້ອຍ
ແລະຟາດຂ້ອຍລົງເປັນຕ່ອນໆພຣະອົງໄດ້ຕັ້ງຂ້ອຍໃຫ້ເປັນເປົ້າຂອງພຣະອົງ
13 ນັກທະນູຂອງພຣະອົງອ້ອມຂ້ອຍ ພຣະອົງໄດ້ແທງແອວຂອງຂ້ອຍ
ແລະບໍ່ໄດ້ອີ່ດູຕົນເລີຍ ພຣະອົງໄດ້ຖອກນ້ຳບີຂອງຂ້ອຍລົງເທິງດິນ
14 ພຣະອົງໄດມ້າງກຳແພງເຂົ້າໄປເປັນປ່ອງໆ
ພຣະອົງໄດ້ແລ່ນເຂົ້າໃສ່ຂ້ອຍເໝືອນມະນຸດທີ່ມີແຮງ
15 ຂ້ອຍຈັບຜ້າກະສອບຕິດໜັງຂອງຂ້ອຍ
ແລະເຮັດໃຫ້ເຂົາສັດຂອງຂ້ອຍເປື້ອນເປິດ້ວຍຂີ້ຝຸ່ນດິນ
16 ໜ້າຂອງຂ້ອຍແດງດ້ວຍການຮ້ອງໄຫ້

ເງົາມັດຈຸລາດຢູ່ທີ່ໜັງຕາຂອງຂ້ອຍ
17 ເຖິງວ່າໃນມືຂອງຂ້ອຍບໍ່ມີຄວາມອະຍຸດຕິທຳເລີຍ
ແລະຄຳອະທິຖານຂອງຂ້ອຍກໍບໍລິສຸດ
18 ໂອ ແຜ່ນດິນໂລກເອີຍ ຢ່າປິດບັງເລືອດຂອງຂ້ອຍແລະ
ຢ່າໃຫ້ສຽງຮ້ອງຂອງຂ້ອຍມີບ່ອນຢຸດພັກ
19 ເບິ່ງແມ ດຽວນີ້ເອງພະຍານຂອງຂ້ອຍກໍຢູ່ເທິງສະຫວັນ
ແລະພຣະອົງຜູ້ຮັບຮອງຂ້ອຍກໍຢູ່ໃນທີ່ສູງ
20 ເພື່ອນຂອງຂ້ອຍດູໝິ່ນຂ້ອຍ
ແຕ່ຕາຂອງຂ້ອຍຖອກນ້ຳຕາອອກຖວາຍ ພຣະເຈົ້າ
21 ຂໍໃຫ້ຜູ້ໜຶ່ງຜູ້ໃດອ້ອນວອນເພື່ອມະນຸດຕໍ່ ພຣະເຈົ້າ
ເໝືອນທີ່ມະນຸດອ້ອນວອນເພື່ອເພື່ອນບ້ານຂອງຕົນ
22 ເພາະວ່າຕໍ່ໄປອີກບໍ່ຫລາຍປີ
ຂ້ອຍຈະໄປຕາມທາງທີ່ຂ້ອຍຈະບໍ່ກັບ”

# ບົດທີ 17

## ໂຢບອ້ອນວອນຕໍ່ພຣະເຈົ້າ

1 “ລົມຫາຍໃຈຂອງຂ້ອຍໄດ້ແຕກດັບ
ວັນເວລາຂອງຂ້ອຍກໍຈົບລົງ ຂຸມຝັງສົບຄອຍຖ້າສຳລັບຂ້ອຍແລ້ວ
2 ຄົນມັກເຍາະເຍີ້ຍກໍຢູ່ຮອບຂ້ອຍນີ້ເອງ
ແລະຕາຂອງຂ້ອຍກໍຈ້ອງຢູ່ທີ່ການນິນທາຂອງພວກເຂົາ
3 ‘ໂຜດໄດ້ວາງປະກັນໄວ້ສຳລັບຂ້ານ້ອຍກັບພຣະອົງ
ໃຜຢູ່ບ່ອນນັ້ນທີ່ຈະໃຫ້ປະກັນສຳລັບຂ້ານ້ອຍໄດ້
4 ເພາະພຣະອົງໄດ້ປິດໃຈຂອງພວກເຂົາທັງຫລາຍໄວ້ຈາກຄວາມເຂົ້າໃຈ
ສະນັ້ນ ພຣະອົງຈະບໍ່ໄດ້ຍົກຍ້ອງພວກເຂົາ’
5 ຜູ້ທີ່ກ່າວຄຳຕໍ່ສູ້ເພື່ອນຂອງຕົນ
ໃນຕາຂອງລູກຫລານຂອງພວກເຂົາຈະມືດມົວໄປ
6 ພຣະອົງໄດ້ກະທຳໃຫ້ຂ້ອຍເປັນບ່ອນນິນທາຂອງຊົນຊາດທັງຫລາຍ
ແລະພວກເຂົາຖົ່ມນ້ຳລາຍຫົດໜ້າຂອງຂ້ອຍ
7 ໃນຕາຂອງຂ້ອຍໄດ້ມືດມົວໄປດ້ວຍຄວາມທຸກໂສກ
ແລະອະໄວຍະວະທັງໝົດຂອງຂ້ອຍກໍເໝືອນກັບເງົາ
8 ຄົນທ່ຽງທຳກໍຈະປະຫລາດໃຈດ້ວຍເລື່ອງນີ້
ແລະຄົນບໍ່ມີຄວາມຜິດກໍຈະລຸກຂຶ້ນປັກປ້ຳຄົນໜ້າຊື່ໃຈຄົດ
9 ຄົນຊອບທຳຍັງຈະຍຶດໝັ້ນຢູ່ກັບທາງຂອງຕົນ

ແລະຜູ້ທີ່ມີມືສະອາດກໍຈະແຂງແຮງຫລາຍຂຶ້ນ
10 ແຕ່ພວກເຈົ້າ ທຸກຄົນເຊີນມາອີກ
ຂ້ອຍຈະບໍ່ພົບຄົນທີ່ມີປັນຍາຈັກຄົນໃນພວກເຈົ້າ
11 ວັນຂອງຂ້ອຍກໍຜ່ານພົ້ນໄປ
ແຜນການຂອງຂ້ອຍກໍແຕກຫັກ ຄືຄວາມຄິດໃນໃຈຂອງຂ້ອຍນັ້ນ
12 ພວກເຂົາເຫລົ່ານັ້ນເຮັດກາງຄືນໃຫ້ເປັນກາງເວັນ
ຄວາມສະຫວ່າງນັ້ນກໍສັ້ນ ເພາະເຫດຄວາມມືດ
13 ຖ້າຂ້ອຍລໍຄອຍຖ້າ ແດນຄົນຕາຍຈະເປັນເຮືອນຂອງຂ້ອຍ
ຂ້ອຍໄດ້ກາງບ່ອນນອນອອກໃນຄວາມມືດ
14 ຂ້ອຍໄດ້ເວົ້າກັບຄວາມເປື່ອຍເນົ່າວ່າ ‘ເຈົ້າເປັນພໍ່ຂອງຂ້ອຍ’
ແລະເວົ້າກັບໜອນວ່າ ‘ເຈົ້າເປັນແມ່ຂອງຂ້ອຍ ແລະເປັນເອື້ອຍຂອງຂ້ອຍ’
15 ແລ້ວບັດນີ້ ຄວາມຫວັງຂອງຂ້ອຍຢູ່ທີ່ໃດ
ສ່ວນຄວາມຫວັງຂອງຂ້ອຍນັ້ນໃຜຈະເຫັນໄດ້
16 ຄວາມຫວັງນັ້ນຈະລົງໄປທີ່ດ່ານປະຕູແດນຄົນຕາຍ
ເຮົາຈະລົງໄປນຳກັນໃນຂີ້ຝຸ່ນດິນ”

# ບົດທີ 18

## ບິນດັດກ່າວເຖິງຄວາມທຸກຂອງຄົນຊົ່ວ

1 ແລ້ວບິນດັດ ຄົນຊູອາຕອບວ່າ
2 “ເຈົ້າຈະຄົ້ນຫາຖ້ອຍຄຳດົນປານໃດ
ຈົ່ງມີຄວາມເຂົ້າໃຈ ແລ້ວພາຍຫລັງພວກເຮົາຈະເວົ້າກັນ
3 ເປັນຫຍັງເຮົາຈຶ່ງຖືກນັບໃຫ້ເປັນສັດ
ເປັນຫຍັງເຮົາຈຶ່ງເປັນຄົນໂງ່ໃນສາຍຕາຂອງເຈົ້າ
4 ເຈົ້າຜູ້ຈີກຕົວຂອງເຈົ້າດ້ວຍຄວາມຮ້າຍຂອງເຈົ້າ
ຈະໃຫ້ແຜ່ນດິນໂລກຖືກປະຖິ້ມ ເພາະເຫັນແກ່ເຈົ້າບໍ
ຫລືຈະໃຫ້ກ້ອນຫີນຍ້າຍໄປຈາກບ່ອນຂອງມັນບໍ
5 ຄວາມສະຫວ່າງຂອງຄົນຊົ່ວຈະຖືກດັບມອດໄປ
ແລະແປວໄຟຂອງລາວຈະບໍ່ສ່ອງແສງອີກ
6 ຄວາມສະຫວ່າງໃນເຕັນຂອງລາວຈະມືດ
ແລະຕະກຽງຂອງລາວຈະດັບມອດພ້ອມກັບລາວ
7 ບາດກ້າວອັນແຂງແຮງຂອງລາວກໍຈະສັ້ນເຂົ້າ
ແລະຄວາມຄິດອ່ານຂອງລາວເອງກໍຈະລົ້ມລາວລົງ
8 ເພາະລາວຖືກໂຍນເຂົ້າໄປໃນບ້ວງແຮ້ວດ້ວຍຕີນຂອງລາວເອງ

ແລະລາວຍ່າງຢູ່ເທິງຂຸມ
9 ກັບອັນໜຶ່ງຈະຈັບສົ້ນຕີນຂອງລາວໄວ້
ຜູ້ປຸ້ນຈະມີໄຊຕໍ່ລາວ
10 ມີບ້ວງແຮ້ວເຊື່ອງຢູ່ໃນດິນໄວ້ດັກຈັບລາວ
ມີແຮ້ວວາງຢູ່ຕາມທາງໄວ້ດັກຈັບລາວ
11 ສິ່ງໜ້າຢ້ານຈະເຮັດໃຫ້ລາວປະຫລາດໃຈຢູ່ຮອບດ້ານ
ແລະໄລ່ຕິດສົ້ນຕີນຂອງລາວຢູ່
12 ກຳລັງຂອງລາວກໍຈະອ່ອນລົງໄປ ເພາະຄວາມຫິວ
ແລະໄພພິບັດກໍຈະຄອຍຖ້າພ້ອມຢູ່ຂ້າງລາວ
13 ມັນຈະກິນຄວາມແຂງແກ່ນຂອງຜິວໜັງຂອງລາວ
ແມ່ນແຕ່ລູກກົກຂອງຄວາມຕາຍຈະກິນຄວາມແຂງແກ່ນຂອງລາວ
14 ຄວາມໄວ້ວາງໃຈຂອງລາວຈະຖືກຖອນອອກຈາກເຕັນຂອງລາວ
ຈະຖືກນຳມາຍັງກະສັດຂອງຄວາມໜ້າຢ້ານ
15 ສິ່ງທີ່ບໍ່ແມ່ນຂອງລາວຈະອາໄສຢູ່ໃນເຕັນຂອງລາວ
ຈະມີມາດໂຮຍຢູ່ເທິງທີ່ຢູ່ຂອງລາວ
16 ຮາກທີ່ຢູ່ທາງລຸ່ມລາວຈະແຫ້ງໄປ
ແລະກິ່ງທີ່ຢູ່ເທິງລາວຈະຖືກຕັດອອກ
17 ການລະນຶກເຖິງລາວຈະພິນາດໄປຈາກໂລກ
ແລະລາວຈະບໍ່ມີຊື່ຢູ່ໃນຖະໜົນ
18 ລາວຈະຖືກຂັບໄລ່ຈາກຄວາມສະຫວ່າງເຂົ້າສູ່ຄວາມມືດ
ແລະຈະຖືກຂັບໄລ່ອອກໄປຈາກແຜ່ນດິນໂລກ
19 ລາວຈະບໍ່ມີລູກ ຫລືຫລານທ່າມກາງປະຊາຊົນຂອງລາວ
ແລະຈະບໍ່ມີໃຜເຫລືອຢູ່ໃນບ່ອນທີ່ລາວເຄີຍອາໄສຢູ່
20 ຜູ້ທີ່ມາພາຍຫລັງລາວກໍຈະປະຫລາດໃຈດ້ວຍວັນຂອງລາວ
ເໝືອນກັບຜູ້ທີ່ມາກ່ອນກໍຢ້ານກົວດ້ວຍ
21 ຈິງແທ້ ບ່ອນຢູ່ຂອງຄົນຊົ່ວເປັນຢ່າງນີ້ແຫລະ
ແລະບ່ອນຢູ່ຂອງຄົນທີ່ບໍ່ຮູ້ຈັກພຣະເຈົ້າກໍເປັນຢ່າງນີ້ແຫລະ”

# ບົດທີ 19

## ຄຳຕອບຂອງໂຢບ

1ຄັນແລ້ວໂຢບໄດ້ຕອບວ່າ:
2 ເປັນຫຍັງພວກເຈົ້າຈຶ່ງເວົ້າທໍລະມານຂ້ອຍ.
3 ເຈົ້າໄດ້ໝິ່ນປະໝາດຂ້ອຍຕະຫລອດເວລາ

ແລະເຈົ້າໄດ້ດ່າຂ້ອຍຢ່າງບໍ່ລະອາຍເລີຍ.
4 ສົມມຸດວ່າຂ້ອຍເຮັດຜິດ ຄວາມຜິດນັ້ນຈະເຮັດໃຫ້ເຈົ້າເສຍຫາຍຫຍັງ.
5 ເຈົ້າຄິດວ່າເຈົ້າດີກວ່າຂ້ອຍ
ແລະເຝົ້າເບິ່ງຄວາມຍາກລຳບາກຂອງຂ້ອຍ
ເໝືອນເປັນຜູ້ພິສູດຄວາມຜິດຂອງຂ້ອຍ.
6 ເຈົ້າບໍ່ຮູ້ບໍວ່າແມ່ນ **ພຣະເຈົ້າ** ທີ່ເຮັດດັ່ງນີ້
ແລະໄດ້ຊົງວາງແຮ້ວດັກຈັບຂ້ອຍ.
7 ຂ້ອຍໄດ້ຄັດຄ້ານການໃຊ້ອຳນາດອັນຮຸນແຮງຂອງພຣະອົງ
ແຕ່ບໍ່ມີໃຜຟັງ
ຂ້ອຍຮ້ອງຫາຄວາມຍຸດຕິທຳ ແຕ່ບໍ່ມີເລີຍ.
8 **ພຣະເຈົ້າ** ໄດ້ຊົງຕັນທາງໄວ້ ຂ້ອຍຈຶ່ງເຂົ້າໄປບໍ່ໄດ້
ພຣະອົງຊົງປົກປິດທາງຂ້ອຍດ້ວຍຄວາມມືດ.
9 ພຣະອົງຊົງຍຶດເອົາຊັບສົມບັດທັງໝົດຂອງຂ້ອຍໄປ
ແລະຊົງທຳລາຍຊື່ສຽງຂອງຂ້ອຍ.
10 ພຣະອົງຊົງທຳລາຍຂ້ອຍໃນທຸກດ້ານ
ພຣະອົງຊົງຮື້ຖອນຄວາມຫວັງຂອງຂ້ອຍຖິ້ມ
ຊົງປະປ່ອຍຂ້ອຍໃຫ້ຫ່ຽວແຫ້ງ ແລະຕາຍເສຍ.
11 **ພຣະເຈົ້າ** ຊົງພິໂລດຂ້ອຍຢ່າງຮ້າຍແຮງ
ຊົງເຮັດກັບຂ້ອຍເໝືອນສັດຕູຜູ້ຮ້າຍກາດຂອງພຣະອົງ.
12 ພຣະອົງຊົງໃຫ້ທະຫານຂອງພຣະອົງມາໂຈມຕີຂ້ອຍ
ພວກທະຫານໄດ້ຊຸດຂຸມກຳລັງ ແລະປິດລ້ອມເຕັນຂອງຂ້ອຍໄວ້.
13 **ພຣະເຈົ້າ** ຊົງເຮັດໃຫ້ພີ່ນ້ອງຂອງຂ້ອຍປະຖິ້ມຂ້ອຍ
ຜູ້ທີ່ຂ້ອຍລື້ງເຄີຍກໍຫັນໜີຈາກຂ້ອຍ.
14 ຍາດພີ່ນ້ອງກັບເພື່ອນຝູງຂອງຂ້ອຍໄດ້ລືມຂ້ອຍ
15 ແຂກທີ່ຂ້ອຍເຄີຍຮັບຕ້ອນໃນເຮືອນຂອງຂ້ອຍກໍລືມຂ້ອຍເສຍ
ສາວໃຊ້ຂອງຂ້ອຍກໍເຮັດຕໍ່ຂ້ອຍເໝືອນຄົນຕ່າງໜ້າ ແລະຕ່າງຖິ່ນ.
16 ເຖິງແມ່ນຂ້ອຍເອີ້ນຮ້ອງຂໍໃຫ້ຄົນໃຊ້ຊ່ອຍ ລາວກໍບໍ່ຕອບ.
17 ເມຍຂອງຂ້ອຍກໍທົນເໝັນກິ່ນຫາຍໃຈຂອງຂ້ອຍບໍ່ໄດ້
ອ້າຍນ້ອງຂອງຂ້ອຍກໍບໍ່ມາໃກ້ຂ້ອຍ.
18 ພວກເດັກນ້ອຍກໍກຽດຊັງຂ້ອຍ ແລະຫົວຂວັນເມື່ອພວກເຂົາເຫັນຂ້ອຍ.
19 ເພື່ອນສະໜິດຂອງຂ້ອຍໄດ້ເບິ່ງຂ້ອຍດ້ວຍຄວາມເບື່ອໜ່າຍ
ຄົນທັງຫລາຍທີ່ຂ້ອຍຮັກແພງກໍຫັນໜ້າຕໍ່ສູ້ຂ້ອຍ.
20 ຂ້ອຍຈ່ອຍຜອມຈົນເຫັນແຕ່ໜັງຕິດກະດູກ

ເກືອບຈະເອົາຊີວິດໄປບໍ່ລອດ.
21 ເຈົ້າເປັນເພື່ອນຂອງຂ້ອຍ ຈົ່ງສົງສານຂ້ອຍແດ່
ພຣະຫັດຂອງ ພຣະເຈົ້າ ໄດ້ທຸບຕີຂ້ອຍແລ້ວ.
22 ເປັນຫຍັງເຈົ້າຈຶ່ງຕິດຕາມທຳຮ້າຍຂ້ອຍເໝືອນຢ່າງ ພຣະເຈົ້າ
ເປັນຫຍັງເຈົ້າຈຶ່ງບໍ່ພໍໃຈກັບການທໍລະມານຂ້ອຍນັ້ນ.
23 ຂ້ອຍຢາກຈະໃຫ້ບາງຄົນບັນທຶກຄຳທີ່ຂ້ອຍເວົ້ານີ້ໄວ້
ແລະຂຽນຄຳເວົ້າຂອງຂ້ອຍໄວ້ໃນປື້ມ.
24 ຫລືໃຊ້ເຫລັກຂຽນໄວ້ໃນຫີນ
ເພື່ອມັນຈະໄດ້ມີຢູ່ຕະຫລອດໄປ.
25 ແຕ່ຂ້ອຍຮູ້ວ່າມີພຣະຄຸ້ມຄອງອົງໜຶ່ງຢູ່ໃນສະຫວັນຊັ້ນຟ້າ
ຜູ້ຊຶ່ງຈະມາຕໍ່ສູ້ຄະດີໃຫ້ຂ້ອຍໃນເວລາສຸດທ້າຍ.
26 ເຖິງແມ່ນວ່າຜິວໜັງແລະເນື້ອກາຍຂ້ອຍຖືກທຳລາຍແລ້ວ
ໃນຊີວິດນີ້ຂ້ອຍຍັງຈະເຫັນ ພຣະເຈົ້າຢູ່.
27 ຂ້ອຍຈະເຫັນພຣະອົງດ້ວຍຕາຂ້ອຍເອງ
ແລະພຣະອົງຈະບໍ່ເປັນຜູ້ແປກໜ້າ
ຂ້ອຍໄດ້ເສຍກຳລັງໃຈຍ້ອນເຈົ້າເວົ້າວ່າ,
28 "ພວກເຮົາໄດ້ທໍລະມານລາວຢ່າງໃດ?"
ເຈົ້າໄດ້ຊອກຫາເຫດຜົນບາງຢ່າງເພື່ອໂຈມຕີຂ້ອຍ.
29 ແຕ່ບັດນີ້ຈົ່ງຢ້ານກົວດາບ
ພຣະພິໂລດຂອງ ພຣະເຈົ້າ ຈະນຳດາບມາລົງໂທດ
ເພື່ອເຈົ້າຈະຮູ້ວ່າມີຜູ້ໜຶ່ງຈະພິພາກສາ.

# ບົດທີ 20

## ໂສຟາຄິດວ່າຄວາມບາບທີ່ໂຢບເຊື່ອງຢູ່ຈະປະກົດ

1 ແລ້ວ ໂຊຟາ ຊາວ ນາອາມາ ຕອບວ່າ
2 "ເພາະເຫດນັ້ນ ຄວາມຄິດຂອງຂ້ອຍ
ຂ້ອຍຈຶ່ງຕ້ອງຕອບດ້ວຍຄວາມຮີບຮ້ອນຍ້ອນການນີ້
3 ຂ້ອຍໄດ້ຟັງຄຳຕິຕຽນທີ່ໝິ່ນປະໝາດແລ້ວ
ເພາະເຫດຈິດໃຈຂ້ອຍຮູ້ເລື່ອງຂ້ອຍຈຶ່ງຕ້ອງຕອບດ້ວຍສະຕິປັນຍາ
4 ຕັ້ງແຕ່ດຶກດຳບັນມາ
ຕັ້ງແຕ່ມະນຸດຖືກວາງໄວ້ເທິງແຜ່ນດິນໂລກ
ເຈົ້າບໍ່ຮູ້ຫລືວ່າ
5 ສຽງໄຊຊະນະຂອງຄົນຊົ່ວນັ້ນສັ້ນ

ແລະຄວາມຊື່ນບານຂອງຄົນໜ້າຊື່ໃຈຄົດນັ້ນເປັນແຕ່ໜ້ອຍດຽວ
6 ເຖິງແມ່ນຄວາມສູງຂອງລາວຂຶ້ນໄປເຖິງຟ້າສະຫວັນ
ແລະຫົວຂອງລາວໄປເຖິງໝູ່ເມກ
7 ລາວຈະພິນາດເປັນນິດເໝືອນອາຈົມຂອງລາວເອງ
ບັນດາຄົນທີ່ເຄີຍເຫັນລາວຈະເວົ້າວ່າ 'ລາວຢູ່ທີ່ໃດ'
8 ລາວຈະບິນໄປຄືຄວາມຝັນ ແລະຈະບໍ່ມີໃຜພົບລາວອີກ
ລາວຈະຖືກໄລ່ໄປຄືຝັນໃນກາງຄືນ
9 ໃນຕາຊຶ່ງໄດ້ເຫັນລາວຈະບໍ່ເຫັນລາວອີກ
ຫລືບ່ອນຢູ່ຂອງລາວຈະບໍ່ເຫັນລາວອີກເລີຍ
10 ລູກຫລານຂອງລາວຈະຊອກຫາຄວາມຊ່ອຍເຫລືອຈາກຄົນຍາກຈົນ
ແລະມືຂອງລາວຈະຄືນຊັບສົມບັດຂອງລາວ
11 ກະດູກຂອງລາວເຕັມໄປດ້ວຍ
ຄວາມບາບຂອງຄົນໜຸ່ມຊຶ່ງຈະນອນລົງກັບລາວໃນຂີ້ຝຸ່ນດິນ
12 ເຖິງວ່າຄວາມຊົ່ວຈະຫວານຢູ່ໃນປາກຂອງລາວ
ແມ່ນລາວເຊື່ອງໄວ້ກ້ອງລີ້ນຂອງລາວ
13 ແມ່ນເຂົາບໍ່ຢາກຈະປ່ອຍ ແລະບໍ່ປະຖິ້ມ
ແຕ່ອົມໄວ້ໃນປາກຂອງລາວ
14 ອາຫານຂອງລາວຈະປ່ຽນໃນທ້ອງຂອງລາວ
ເໝືອນພິດຂອງງູເຫົ່າໃນຕົວລາວ
15 ລາວກືນຊັບສົມບັດລົງໄປ ແຕ່ຈະຮາກມັນອອກມາອີກ
ພຣະເຈົ້າຈະໂຍນມັນອອກມາຈາກທ້ອງຂອງລາວ
16 ລາວຈະດູດພິດຂອງງູເຫົ່າ
ລີ້ນຂອງງູຮ້າຍຈະຂ້າລາວ
17 ລາວຈະບໍ່ເຫັນນ້ຳຫ້ວຍ ຫລືນ້ຳເຊ
ນ້ຳແກ້ງທັງຫລາຍເປັນນ້ຳເຜີ້ງ ແລະນ້ຳນົມໄຫລຢູ່
18 ລາວຈະສົ່ງຄືນຜົນງານຂອງລາວ ແລະຈະບໍ່ກິນ ລາວໄດ້ກຳໄລເທົ່າໃດ
ລາວຈະຕ້ອງສົ່ງຄືນໃຫ້ເທົ່ານັ້ນ ແລະລາວຈະບໍ່ໄດ້ຄວາມຊື່ນບານໃນສິ່ງນັ້ນເລີຍ
19 ເພາະລາວໄດ້ບຽດບຽນ ແລະປະຖິ້ມຄົນຍາກຈົນ
ລາວໄດ້ຍຶດເຮືອນຊຶ່ງລາວບໍ່ໄດ້ສ້າງ
20 ແນ່ນອນ ລາວຈະບໍ່ຮູ້ສຶກສະຫງົບໃຈ
ລາວຈະເກັບສິ່ງທີ່ລາວປາດຖະໜາບໍ່ໄດ້ເລີຍ
21 ອາຫານຂອງລາວຈະບໍ່ມີຫຍັງເຫລືອ ເຫດສະນັ້ນ
ບໍ່ມີໃຜຊອກຫາຊັບສົມບັດຂອງລາວ

22 ໃນຂະນະທີ່ລາວອີ່ມໜຳສຳລານ ລາວຈະຕົກໃນສະພາບຂັດສົນ
ມືຂອງຄົນຊົ່ວທັງປວງຈະມາເຖິງລາວ
23 ເມື່ອກຳລັງຈະອີ່ມທ້ອງຂອງລາວໃຫ້ເຕັມ
ພຣະເຈົ້າຈະໄດ້ສົ່ງຄວາມພິໂລດອັນເດືອດຮ້ອນມາເຖິງລາວ
ແລະຫລັ່ງລົງມາເທິງລາວເມື່ອລາວຮັບປະທານອາຫານຢູ່
24 ລາວຈະລີ້ຈາກອາວຸດເຫລັກ
ຄັນທະນູເຫລັກກ້າຈະແທງລາວຊອດ
25 ລາວດຶງມັນອອກ ແລະມັນອອກມາຈາກຮ່າງກາຍຂອງລາວ
ແລະ ເຫລັກເຫລື້ອມອອກມາຈາກນ້ຳບີຂອງລາວ ຄວາມໜ້າຢ້ານມາເຖິງລາວ
26 ຄວາມມືດທັງປວງຈະເຊື່ອງໄວ້ໃນທີ່ເລິກລັບຂອງລາວ
ໄຟທີ່ບໍ່ຕ້ອງເປົ່າຈະກືນລາວເສຍ
ສິ່ງໃດທີ່ເຫລືອຢູ່ໃນເຕັນຂອງລາວຈະຖືກເຜົາຜານ
27 ຟ້າສະຫວັນຈະສະແດງຄວາມຊົ່ວຊ້າຂອງລາວ
ແລະແຜ່ນດິນໂລກຈະລຸກຂຶ້ນຕໍ່ສູ້ລາວ
28 ຜົນກຳໄລຂອງຄອບຄົວຂອງລາວຈະຖືກເອົາໄປ
ຊັບສົມບັດຂອງລາວຈະຖືກກວາດໄປໃນວັນຂອງພຣະພິໂລດຂອງພຣະເຈົ້າ
29 ນີ້ເປັນສ່ວນຂອງຄົນເລວີທີ່ພຣະເຈົ້າຍົກໃຫ້ ກໍເປັນຢ່າງນັ້ນ
ແລະເປັນມໍລະດົກທີ່ພຣະເຈົ້າໄດ້ກຳນົດໃຫ້ລາວກໍເປັນຢ່າງນັ້ນ”

# ບົດທີ 21

## ໂຢບທຸກໃຈເລື່ອງຄວາມຈະເລີນຂອງຄົນອະທຳ

1 ແລ້ວໂຢບຕອບວ່າ
2 “ຂໍຟັງຖ້ອຍຄຳຂອງຂ້ອຍຢ່າງລະມັດລະວັງ
ແລະໃຫ້ຄຳນີ້ປອບໃຈເຈົ້າ
3 ຈົ່ງອົດກັ້ນແດ່ ແລະຂ້ອຍຈະເວົ້າ
ແລະເມື່ອຂ້ອຍເວົ້າແລ້ວ ກໍເຍາະເຍີ້ຍຕໍ່ໄປສາ
4 ສ່ວນຂ້ອຍນີ້ ຈະຕໍ່ວ່າມະນຸດບໍ ຖ້າເປັນເຊັ່ນນັ້ນ
ເປັນຫຍັງໃຈຂ້ອຍຈຶ່ງບໍ່ຄວນເປັນທຸກ
5 ຈົ່ງເບິ່ງຂ້ອຍ ແລະຈົ່ງປະຫລາດໃຈສາ
ແລະເຈົ້າຈົ່ງເອົາມືປິດປາກຂອງເຈົ້າ
6 ເມື່ອຂ້ອຍລະນຶກເຖິງເລື່ອງນີ້ ຂ້ອຍກໍປະຫລາດໃຈ
ແລະຄວາມສັ່ນສະທ້ານກໍຈັບເນື້ອໜັງຂອງຂ້ອຍ
7 ເປັນຫຍັງຄົນຊົ່ວຈຶ່ງມີຊີວິດຢູ່ ຈົນເຖິງເຖົ້າແກ່

ແລະຈະເລີນມີອຳນາດຫລາຍຂຶ້ນ
8 ເຊື້ອສາຍຂອງພວກເຂົາກໍຕັ້ງໝັ້ນຄົງຢູ່ໃນສາຍຕາຂອງພວກເຂົາ
ແລະລູກຫລານຂອງພວກເຂົາກໍຢູ່ຕໍ່ໜ້າຕໍ່ຕາພວກເຂົາ
9 ເຮືອນຂອງພວກເຂົາທັງຫລາຍກໍປອດໄພປາດສະຈາກຄວາມຢ້ານກົວ
ແລະໄມ້ແສ້ຂອງ ພຣະເຈົ້າ ກໍບໍ່ຢູ່ເທິງພວກເຂົາ
10 ງົວເຖິກຂອງພວກເຂົາບໍ່ໄດ້ຂາດກຳລັງ
ງົວແມ່ຂອງພວກເຂົາອອກລູກ ແລະບໍ່ມີຫລຸລູກ
11 ພວກເຂົາສົ່ງລູກນ້ອຍໆອອກໄປຢູ່ຄືຝູງແບ້ແກະ
ແລະລູກຫລານຂອງພວກເຂົາກໍເຕັ້ນລຳ
12 ພວກເຂົາຈັບເອົາກອງ ແລະພິນຄູ່
ແລະປິຕິຍິນດີຕາມສຽງຂຸ່ຍ
13 ຕະຫລອດວັນເວລາຂອງພວກເຂົາ ພວກເຂົາກໍຈະເລີນ
ແລະລົງໄປທີ່ແດນຄົນຕາຍໃນພິບຕາດຽວ
14 ພວກເຂົາຈຶ່ງທູນ ພຣະເຈົ້າ ວ່າ ‘ຂໍເຊີນໄປຈາກພວກຂ້ານ້ອຍ
ເພາະເຮົາບໍ່ປາດຖະໜາຄວາມຮູ້ໃນທາງຂອງພຣະອົງ
15 ພຣະເຈົ້າ ອົງມີລິດອຳນາດອັນຍິ່ງໃຫຍ່ທີ່ສຸດຄືຜູ້ໃດ ທີ່ເຮົາຈະຕ້ອງບົວລະບັດພຣະອົງ
ເຮົາອະທິຖານຕໍ່ພຣະອົງ ເຮົາຈະໄດ້ປະໂຫຍດຫຍັງ’
16 ເບິ່ງແມ ຄວາມຈະເລີນຂອງພວກເຂົາທັງຫລາຍບໍ່ຢູ່ໃນກຳມືຂອງພວກເຂົາ
ຄຳປຶກສາຂອງຄົນຊົ່ວຂໍໃຫ້ຢູ່ຫ່າງໄກຈາກຂ້ອຍ
17 ຕະກຽງຂອງຄົນຊົ່ວດັບມອດຫລາຍເທື່ອເທົ່າໃດ
ຄວາມຍາກລຳບາກມາເຖິງພວກເຂົາຫລາຍເທົ່າໃດ
ພຣະເຈົ້າ ໄດ້ແຈກຢາຍຄວາມເສົ້າໂສກດ້ວຍພຣະພິໂລດຂອງພຣະອົງ
18 ພວກເຂົາເປັນຄືເຟືອງທີ່ລົມພັດປິວໄປ
ແລະເປັນເໝືອນແກບທີ່ພາຍຸພັດໄປ
19 ພຣະເຈົ້າ ໄດ້ສະສົມຄວາມຊົ່ວຊ້າຂອງພວກເຂົາໄວ້ໃຫ້ລູກຫລານຂອງພວກເຂົາບໍ
ພຣະອົງໄດ້ຕອບແທນແກ່ພວກເຂົາເອງ ແລະພວກເຂົາກໍຈະຮູ້ຈັກ
20 ໃນຕາຂອງພວກເຂົາຈະເຫັນຄວາມພິນາດຂອງຕົນເອງ
ແລະພວກເຂົາຈະດື່ມພຣະພິໂລດຂອງ ພຣະເຈົ້າ ອົງມີລິດອຳນາດອັນຍິ່ງໃຫຍ່ທີ່ສຸດ
21 ເຫດວ່າພວກເຂົາມີຄວາມຍິນດີອັນໃດໃນເລື່ອງເຊື້ອສາຍທີ່ຕາມເຂົາມາ
ເມື່ອຈຳນວນເດືອນຂອງເຂົາຖືກຕັດຂາດເສຍແລ້ວ
22 ມີຜູ້ໃດຈະສອນຄວາມຮູ້ໃຫ້ແກ່ ພຣະເຈົ້າ ໄດ້ບໍ
ເມື່ອພຣະອົງໄດ້ພິພາກສາພວກທີ່ຢູ່ເທິງຟ້າສະຫວັນ
23 ຄົນໜຶ່ງຕາຍເມື່ອຍັງແຂງແຮງ

ແລະສະບາຍ ປອດໄພ
24 ຮ່າງກາຍຂອງລາວເຕັມໄປດ້ວຍນໍ້ານົມ
ແລະກະດູກຂອງລາວກໍຊຸ່ມດ້ວຍໄຂກະດູກ
25 ອີກຄົນໜຶ່ງຕາຍດ້ວຍໃຈຂົມຂື່ນ
ບໍ່ເຄີຍໄດ້ຊີມຄວາມສຸກຈັກເທື່ອ
26 ພວກເຂົາທັງສອງນອນລົງໃນຂີ້ຝຸ່ນດິນຄືກັນ
ແລະຕົວໜອນກໍກັດກິນພວກເຂົາທັງສອງຄືກັນ
27 ເບິ່ງແມ ຂ້ອຍຮູ້ຄວາມຄິດຂອງເຈົ້າ
ແລະອຸບາຍຂອງເຈົ້າທີ່ຈະເຮັດຜິດຕໍ່ຂ້ອຍ
28 ເພາະເຈົ້າເວົ້າວ່າ ‘ວັງຂອງເຈົ້ານາຍຢູ່ທີ່ໃດ
ເຕັນຊຶ່ງຄົນຊົ່ວອາໄສນັ້ນຢູ່ທີ່ໃດ’
29 ເຈົ້າບໍ່ໄດ້ຖາມນັກທ່ອງທ່ຽວ
ແລະເຈົ້າບໍ່ໄດ້ຮັບຮູ້ພະຍານຂອງພວກເຂົາບໍ
30 ວ່າຄົນຊົ່ວໄດ້ມ້ຽນໄວ້ຈົນເຖິງວັນຂອງໄພພິບັດ
ແລະພວກເຂົາຈະຖືກນຳໄປຍັງວັນແຫ່ງພຣະພິໂລດ
31 ໃຜແຈ້ງວິທີການຂອງລາວຕໍ່ໜ້າລາວ
ແລະຜູ້ໃດສະໜອງລາວໃນສິ່ງທີ່ລາວໄດ້ເຮັດ
32 ເຖິງຢ່າງນັ້ນລາວຈະຖືກຫາມໄປຍັງຂຸມຝັງສົບ
ແລະຈະຍັງຢູ່ໃນອຸບໂມງ
33 ສຳລັບລາວກ້ອນດິນທີ່ພູເຂົາກໍເບົາສະບາຍ
ຄົນທັງປວງກໍຕາມລາວໄປ ແລະຄົນທີ່ໄປຂ້າງໜ້າກໍນັບບໍ່ຖ້ວນ
34 ແລ້ວເປັນຫຍັງເຈົ້າຈະມາເລົ້າໂລມໃຈຂ້ອຍດ້ວຍສິ່ງເປົ່າໆ
ຄຳຕອບຂອງເຈົ້າບໍ່ມີຫຍັງເຫລືອແລ້ວນອກຈາກການຂີ້ຕົວະ”

# ບົດທີ 22

## ເອລີຟັດຟ້ອງໂຢບເປັນເທື່ອທີສາມ

1 ແລ້ວ ເອລີຟັດ ຊາວ ເຕມານ ຕອບວ່າ
2 “ຄົນຈະເປັນປະໂຫຍດອັນໃດແກ່ພຣະເຈົ້າໄດ້ບໍ ຈິງແທ້
ຜູ້ໃດສະຫລາດກໍເປັນປະໂຫຍດແກ່ຕົນເອງຕ່າງຫາກ
3 ຖ້າເຈົ້າເປັນຄົນຊອບທຳ ຈະເປັນທີ່ພໍພຣະໄທແກ່ພຣະເຈົ້າອົງມີລິດອຳນາດຍິ່ງໃຫຍ່ບໍ
ຫລືຖ້າທາງທັງຫລາຍຂອງເຈົ້າດີ ແລະສັດຊື່ ຈະເປັນປະໂຫຍດອັນໃດແກ່ພຣະອົງ
4 ພຣະອົງຈະໄດ້ຕິຕຽນເຈົ້າເພາະຢຳເກງບໍ
ພຣະອົງຈະໄດ້ສູ້ຄວາມກັບເຈົ້າບໍ

5 ຄວາມຊົ່ວຂອງເຈົ້າໃຫຍ່ກວ່າ ບໍ່ແມ່ນບໍ
ຄວາມຊົ່ວຊ້າຂອງເຈົ້າບໍ່ມີທີ່ສິ້ນສຸດ ບໍ່ແມ່ນບໍ
6 ເພາະເຈົ້າຍຶດຂອງປະກັນໄປຈາກພີ່ນ້ອງໂດຍບໍ່ມີເຫດຜົນ
ແລະປຸ້ນເສື້ອຜ້າຂອງຄົນທີ່ເປືອຍກາຍຢູ່
7 ເຈົ້າບໍ່ໄດ້ໃຫ້ນໍ້າແກ່ຄົນທີ່ຫິວນໍ້າ
ແລະເຈົ້າບໍ່ໄດ້ເອົາເຂົ້າໃຫ້ແກ່ຄົນທີ່ຫິວເຂົ້າ
8 ຄົນທີ່ມີອຳນາດບາດໃຫຍ່ຍ່ອມໄດ້ທີ່ດິນເປັນກຳມະສິດ
ແລະຄົນທີ່ມີໜ້າມີຕາກໍໄດ້ເຂົ້າອາໄສຢູ່
9 ເຈົ້າໄລ່ແມ່ໝ້າຍອອກໄປມືເປົ່າ
ແລະແຂນຂອງລູກກຳພ້າພໍ່ກໍຫັກ
10 ເພາະສະນັ້ນ ກັບດັກຢູ່ຮອບເຈົ້າ
ແລະຄວາມຢ້ານມາຖືກເຈົ້າໃນບາດດຽວ
11 ຫລືຄວາມມືດຈົນເຈົ້າບໍ່ເຫັນຫຍັງ
ແລະນໍ້າທີ່ຖ້ວມກໍປົກຄຸມເຈົ້າໄວ້
12 ພຣະເຈົ້າບໍ່ໄດ້ສະຖິດຢູ່ໃນທີ່ສູງໃນຟ້າສະຫວັນບໍ
ເບິ່ງດາວທີ່ສູງທີ່ສຸດແມ ມັນສູງແທ້ໆ
13 ເພາະສະນັ້ນ ເຈົ້າວ່າ ‘ພຣະເຈົ້າໄດ້ຮູ້ສິ່ງໃດ
ພຣະອົງຈະໄດ້ທະລຸເມກມືດທຶບໄປພິພາກສາບໍ
14 ເມກທຶບຫຸ້ມຫໍ່ພຣະອົງໄວ້ ພຣະອົງເບິ່ງຫຍັງບໍ່ເຫັນ
ແລະພຣະອົງໄດ້ດຳເນີນໂດຍຮອບເທິງພື້ນຟ້າ’
15 ເຈົ້າມຸ້ງໜ້າໄປທາງເກົ່າບໍ
ຊຶ່ງຄົນຊົ່ວເຄີຍດຳເນີນນັ້ນ
16 ຄົນຜູ້ທີ່ໄດ້ຈິບຫາຍໄປກ່ອນເວລາກຳນົດຂອງພວກເຂົາ
ຮາກຖານຂອງເຂົາຖືກພັດໄຫລໄປດ້ວຍນໍ້າ
17 ພວກເຂົາທູນພຣະເຈົ້າວ່າ ‘ຂໍໄດ້ໄປຈາກພວກຂ້ານ້ອຍ’
ແລະ ‘ພຣະເຈົ້າອົງມີລິດອຳນາດອັນຍິ່ງໃຫຍ່ທີ່ສຸດຈະເຮັດສິ່ງໃດແກ່ເຂົາ’
18 ແຕ່ພຣະອົງໄດ້ໃຫ້ເຮືອນຂອງພວກເຂົາເຕັມດ້ວຍຊັບສົມບັດ
ແຕ່ຄຳສັ່ງສອນຂອງຄົນຊົ່ວຂໍໃຫ້ຫ່າງໄກຈາກຂ້ອຍ
19 ຄົນຊອບທຳຈະເຫັນ ແລະຊົມຊື່ນຍິນດີ
ຄົນບໍ່ມີຄວາມຜິດຈະເຍາະເຍີ້ຍ
20 ຄົນທີ່ລຸກຂຶ້ນຕໍ່ສູ້ກໍບໍ່ຖືກຕັດຂາດ
ແຕ່ຂອງອັນບໍລິບູນທີ່ເຫລືອນັ້ນໄຟກໍໄໝ້ ບໍ່ແມ່ນບໍ
21 ຈົ່ງເຂົ້າມາຄືນດີກັບພຣະເຈົ້າ ແລະຢູ່ຢ່າງສັນຕິ

ດັ່ງນັ້ນສິ່ງທີ່ດີຈະມາເຖິງເຈົ້າ
22 ຂໍຈົ່ງຮັບກົດໝາຍຈາກພຣະໂອດຂອງພຣະອົງ
ແລະເກັບມ້ຽນພຣະທຳຂອງພຣະອົງໄວ້ໃນໃຈຂອງເຈົ້າ
23 ຖ້າເຈົ້າກັບມາຫາພຣະເຈົ້າອົງມີລິດອຳນາດອັນຍິ່ງໃຫຍ່ທີ່ສຸດ
ເຈົ້າຈະຈະເລີນ ແລະຈະຖິ້ມຄວາມຊົ່ວຊ້າໃຫ້ໄກຈາກເຕັນຂອງເຈົ້າ
24 ເຈົ້າຈະຮວບຮວມຄຳໄວ້ເໝືອນຂີ້ຝຸ່ນດິນ
ແລະຄຳເມືອງໂອຟີໄວ້ເໝືອນຫີນໃນແມ່ນໍ້າ
25 ແລະພຣະເຈົ້າອົງມີລິດອຳນາດອັນຍິ່ງໃຫຍ່ຈະເປັນຜູ້ປ້ອງກັນເຈົ້າ
ແລະເຈົ້າຈະມີເງິນຢ່າງຫລວງຫລາຍ
26 ແລ້ວເຈົ້າຈະປິຕິຍິນດີໃນພຣະເຈົ້າອົງມີລິດອຳນາດຍິ່ງໃຫຍ່
ແລະເງີຍໜ້າຂອງເຈົ້າຫາພຣະເຈົ້າ
27 ເຈົ້າຈະອະທິຖານຕໍ່ພຣະອົງ ແລະພຣະອົງຈະໄດ້ຟັງເຈົ້າ
ແລະເຈົ້າຈະເຮັດຕາມຄຳປະຕິຍານຂອງເຈົ້າ
28 ເຈົ້າຈະຕັດສິນໃຈໃນເລື່ອງໃດ ແລະເລື່ອງນັ້ນຈະສຳເລັດສົມປະສົງ
ແລະຈະມີແສງສະຫວ່າງສ່ອງທາງໃຫ້ເຈົ້າ
29 ເມື່ອມະນຸດຖືກຖິ້ມລົງໄປ ເຈົ້າຈະກ່າວວ່າ ‘ຈົ່ງລຸກຂຶ້ນເທີນ
ແລະພຣະອົງໄດ້ຊ່ວຍຄົນຖ່ອມໃຈໃຫ້ລອດພົ້ນ’
30 ພຣະອົງໄດ້ຊ່ວຍຄົນທີ່ມີຄວາມຜິດໃຫ້ພົ້ນ
ເພິ່ນຈະພົ້ນໂດຍຄວາມບໍລິສຸດຈາກມືຂອງເຈົ້າ”

# ບົດທີ 23

## ໂຢບອາໄລເຖິງພຣະເຈົ້າ

1 ແລ້ວໂຢບຕອບວ່າ
2 “ຄຳຮ້ອງທຸກຂອງຂ້ອຍກໍຂົມຂື່ນໃນມື້ນີ້ດ້ວຍ
ການທີ່ຂ້ອຍຖືກຕີກໍໜັກກວ່າການຮ້ອງຄາງຂອງຂ້ອຍ
3 ໂອ ຂ້ອຍຢາກຮູ້ວ່າຈະພົບພຣະອົງໄດ້ທີ່ໃດ
ເພື່ອຂ້ອຍຈະມາເຖິງພຣະທີ່ນັ່ງຂອງພຣະອົງ
4 ຂ້ອຍຈະຍື່ນຄະດີຂອງຂ້ອຍຕໍ່ພຣະພັກພຣະອົງ
ແລະບັນຈຸຂໍ້ໂຕ້ແຍ້ງໃຫ້ເຕັມປາກຂອງຂ້ອຍ
5 ຂ້ອຍຈະຮູ້ຄຳຕອບຂອງພຣະອົງ
ແລະເຂົ້າໃຈສິ່ງທີ່ພຣະອົງຈະກ່າວກັບຂ້ອຍ
6 ພຣະອົງຈະໄດ້ໂຕ້ແຍ້ງກັບຂ້ອຍດ້ວຍລິດທານຸພາບອັນຍິ່ງໃຫຍ່ຂອງພຣະອົງຫລື
ພຣະອົງຈະໄດ້ໃຫ້ກຳລັງແກ່ຂ້ອຍ

7 ໃນບ່ອນນັ້ນ ຄົນທ່ຽງທຳຈະສູ້ຄວາມກັບພຣະອົງໄດ້
ແລະຂ້ອຍຈະຮັບການຊ່ວຍໃຫ້ພົ້ນຈາກຜູ້ພິພາກສາຂອງ
ຂ້ອຍຕະຫລອດໄປເປັນນິດ
8 ເບິ່ງແມ ຂ້ອຍຍ່າງໄປຂ້າງໜ້າ ແຕ່ພຣະອົງບໍ່ໄດ້ສະຖິດຢູ່ບ່ອນນັ້ນ
ແລະຂ້າງຫລັງ ແຕ່ຂ້ອຍກໍບໍ່ສັງເກດເຫັນພຣະອົງ
9 ຂ້າງຊ້າຍມີທີ່ພຣະອົງໄດ້ກະທຳກິດຈະການ ຂ້ອຍກໍບໍ່ເຫັນພຣະອົງ
ຂ້າງຂວາມີພຣະອົງໄດ້ເຊື່ອງໄວ້ ຂ້ອຍຫາພຣະອົງບໍ່ພົບ
10 ດ້ວຍວ່າພຣະອົງໄດ້ຮູ້ທາງທີ່ຂ້ອຍໄປ ເມື່ອພຣະອົງໄດ້ທົດສອບຂ້ອຍແລ້ວ
ຂ້ອຍກໍຈະເປັນເໝືອນຄຳ
11 ຕີນຂອງຂ້ອຍຕິດຮອຍພຣະບາດຂອງພຣະອົງແໜ້ນ
ຂ້ອຍຍ່າງຕາມເສັ້ນທາງຂອງພຣະອົງ ແລະບໍ່ໄດ້ຫັນໄປທາງຂ້າງເລີຍ
12 ຂ້ອຍບໍ່ໄດ້ໜີໄປຈາກພຣະບັນຍັດແຫ່ງຮີມພຣະໂອດຂອງພຣະອົງ
ຂ້ອຍຕີລາຄາພຣະທຳແຫ່ງພຣະໂອດຂອງພຣະອົງ
ສູງກວ່າອາຫານທີ່ຈຳເປັນສຳລັບຂ້ອຍ
13 ແຕ່ພຣະອົງຜັນປ່ຽນບໍ່ໄດ້ ແລະຜູ້ໃດຈະຫັນພຣະອົງໄດ້
ພຣະອົງມີພຣະປະສົງສິ່ງໃດ ພຣະອົງກໍໄດ້ກະທຳສິ່ງນັ້ນ
14 ເພາະວ່າພຣະອົງຈະໄດ້ເຮັດສິ່ງທີ່ພຣະອົງໄດ້ກຳນົດໃຫ້ຂ້ອຍນັ້ນຄົບຖ້ວນ
ແລະສິ່ງຢ່າງນັ້ນເປັນຈຳນວນຫລາຍຢູ່ໃນພຣະດຳລິຂອງພຣະອົງ
15 ເພາະສະນັ້ນ ຂ້ອຍຈຶ່ງສະທົກສະທ້ານຢູ່ຕໍ່ພຣະພັກພຣະອົງ
ເມື່ອຂ້ອຍຕຶກຕອງ ຂ້ອຍກໍໂກດຮ້າຍຕໍ່ພຣະອົງ
16 **ພຣະເຈົ້າ**ໄດ້ກະທຳໃຫ້ໃຈຂອງຂ້ອຍອ່ອນເພຍ
**ພຣະເຈົ້າ**ອົງມີລິດອຳນາດໄດ້ເຮັດໃຫ້ຂ້ອຍຕົກສະທ້ານ
17 ເພາະຂ້ອຍບໍ່ໄດ້ຖືກຕັດຂາດກ່ອນຄວາມມືດມາເຖິງ
ແລະພຣະອົງບໍ່ໄດ້ປິດຄວາມມືດທຶບໄວ້ຈາກໜ້າຂ້ອຍ"

# ບົດທີ 24

## ໂຢບຈົ່ມວ່າພຣະເຈົ້າໄດ້ເມີນເສີຍຕໍ່ຄວາມຊົ່ວຮ້າຍ

1 "ເມື່ອວາລະກຳນົດບໍ່ປິດບັງໄວ້ຈາກ**ພຣະເຈົ້າ**ອົງຜູ້ມີລິດອຳນາດ
ເປັນຫຍັງບັນດາຜູ້ທີ່ຮູ້ຈັກພຣະອົງບໍ່ເຫັນວັນກຳນົດຂອງພຣະອົງ
2 ມີຄົນທີ່ຍ້າຍຫລັກເຂດແດນ
ພວກເຂົາຍຶດຝູງແບ້ແກະພາໄປລ້ຽງ
3 ພວກເຂົາໄລ່ຕ້ອນລາຂອງຄົນກຳພ້າພໍ່ໄປ
ພວກເຂົາເອົາງົວຂອງແມ່ໝ້າຍໄປເປັນປະກັນ

4 ພວກເຂົາຊຸກຄົນຂັດສົນອອກນອກຖະໜົນ
ຄົນຍາກຈົນຂອງແຜ່ນດິນໂລກຕ່າງກໍເຊື່ອງຕົວໝົດ
5 ເບິ່ງແມ ດັ່ງລາປ່າຢູ່ໃນຖິ່ນແຫ້ງແລ້ງກັນດານ
ຄົນຍາກຈົນນັ້ນອອກໄປເຮັດວຽກພະຍາຍາມຫາອາຫານ
ຖິ່ນແຫ້ງແລ້ງໃຫ້ອາຫານແກ່ພວກເຂົາ ແລະລູກທັງຫລາຍຂອງພວກເຂົາ
6 ພວກເຂົາທັງຫລາຍເກັບຫຍ້າແຫ້ງໃນທົ່ງ
ແລະເຂົາເລັມສວນອະງຸ່ນຂອງຄົນຊົ່ວ
7 ພວກເຂົາເຮັດໃຫ້ຄົນທີ່ເປືອຍກາຍນອນຕະຫລອດຄືນໂດຍບໍ່ມີເສື້ອຜ້າ
ແລະບໍ່ມີຜ້າຫົ່ມກັນໜາວ
8 ພວກເຂົາປຽກຝົນແຫ່ງພູເຂົາ
ແລະເກາະຫີນຢູ່ເພາະບໍ່ມີບ່ອນກຳບັງ
9 ມີຄົນຊົ່ວຈັບເອົາເດັກກຳພ້າພໍ່ໄປຈາກເອິກ
ແລະເອົາຂອງປະກັນຈາກຄົນຍາກຈົນ
10 ພວກເຂົາທັງຫລາຍເຮັດໃຫ້ຄົນເຫລົ່ານີ້ຍ່າງເປືອຍກາຍໄປໂດຍບໍ່ມີເສື້ອຜ້າ
ເຂົາກໍແບກຟ່ອນເຂົ້າໄປຈາກຄົນທີ່ຫິວ
11 ເຂົາເຮັດນ້ຳມັນຢູ່ທ່າມກາງກຳແພງຂອງຄົນເຫລົ່ານີ້
ພວກເຂົາຢຽບຢູ່ທີ່ອ່າງອະງຸ່ນ ແຕ່ຄົນເຫລົ່ານີ້ຕ້ອງທົນຄວາມຫິວນ້ຳ
12 ຄົນຮ້ອງຄາງອອກມາຈາກໃນເມືອງ ແລະຈິດໃຈຂອງຄົນບາດເຈັບຮ້ອງຂໍ
ແຕ່ພຣະເຈົ້າບໍ່ໄດ້ສົນພຣະໄທໃນຄວາມໂງ່ຈ້າຂອງເຂົາ
13 ພວກເຂົາຢູ່ໃນພວກທີ່ກະບົດຕໍ່ຄວາມສະຫວ່າງ
ທີ່ບໍ່ຄຸ້ນເຄີຍກັບທາງຂອງຄວາມສະຫວ່າງນັ້ນ
ແລະບໍ່ໄດ້ຢູ່ໃນທາງຂອງຄວາມສະຫວ່າງນັ້ນ
14 ຜູ້ກະທຳການຄາດຕະກຳລຸກຂຶ້ນມາແຕ່ເຊົ້າມືດ ລາວຂ້າຄົນຍາກຈົນ
ແລະຄົນຂັດສົນ ແລະໃນກາງຄືນລາວເປັນເໝືອນຄົນຂີ້ລັກ
15 ຕາຂອງຜູ້ລ່ວງປະເວນີຄອຍຖ້າເວລາຄ່ຳ ກ່າວວ່າ ‘ບໍ່ມີຕາໃດຈະເຫັນຂ້ອຍ’
ແລະລາວກໍປົກໜ້າຂອງລາວ
16 ໃນຍາມມືດ ພວກເຂົາເຈາະເຂົ້າໄປໃນເຮືອນ
ພວກເຂົາໝາຍໄວ້ສຳລັບຕົນເອງໃນເວລາກາງເວັນ ພວກເຂົາບໍ່ຮູ້ຈັກຄວາມສະຫວ່າງ
17 ເພາະເງົາມັດຈຸລາດເປັນເໝືອນເວລາເຊົ້າແກ່ພວກເຂົາທຸກຄົນ ຖ້າໃຜຮູ້ຈັກພວກເຂົາ
ພວກເຂົາກໍເປັນຄວາມຢ້ານຂອງເງົາມັດຈຸລາດ
18 ພວກເຂົາແລ່ນໄວດັ່ງນ້ຳໄຫລ ສ່ວນແບ່ງຂອງພວກເຂົາຖືກສາບແຊ່ງໃນແຜ່ນດິນ
ພວກເຂົາບໍ່ຫັນໜ້າໄປສູ່ສວນອະງຸ່ນຂອງຕົນ
19 ຄວາມແຫ້ງແລ້ງ ແລະຄວາມຮ້ອນເຮັດໃຫ້ນ້ຳຫິມະໄປສັນໃດ

ແດນຄົນຕາຍກໍຈັບເອົາຜູ້ເຮັດບາບໄປສັນນັ້ນ
20 ທ້ອງແມ່ຈະລືມລາວ ຕົວໜອນຈະກິນລາວຢ່າງແຊບ ບໍ່ມີໃຜຈື່ລາວໄດ້ຕໍ່ໄປ
ຄວາມຊົ່ວຈະຫັກລົງຢ່າງຕົ້ນໄມ້
21 ລາວຍຶດເອົາຈາກຍິງໝັນທີ່ບໍ່ມີລູກ
ແລະບໍ່ເຮັດການດີຫຍັງໃຫ້ແກ່ແມ່ໝ້າຍ
22 ລາວໄດ້ທຳລາຍຄົນທີ່ມີກຳລັງດ້ວຍອຳນາດຂອງຕົນ
ລາວລຸກຂຶ້ນ ແລ້ວບໍ່ມີໃຜໝັ້ນໃຈເລື່ອງຊີວິດຂອງຕົນ
23 ພຣະເຈົ້າໄດ້ປະທານຄວາມປອດໄພໃຫ້ລາວ ແລະພວກເຂົາກໍເພິ່ງຢູ່
ແລະພຣະເນດຂອງພຣະອົງຢູ່ເທິງຫົນທາງຂອງພວກເຂົາ
24 ພວກເຂົາທັງຫລາຍຖືກຍ້ອງຍໍຂຶ້ນໜ້ອຍໜຶ່ງແລ້ວກໍຫາຍໄປ ພວກເຂົາຫ່ຽວແຫ້ງ
ແລະດັບໄປຈາກແນວທາງຢ່າງຄົນອື່ນໆພວກເຂົາຖືກຕັດອອກເໝືອນຍອດຮວງເຂົ້າ
25 ແລ້ວບັດນີ້ຖ້າບໍ່ເປັນເຊັ່ນນັ້ນ ໃຜຈະພິສູດໄດ້ວ່າຂ້ອຍຂີ້ຕົວະ
ແລະສະແດງວ່າສິ່ງທີ່ຂ້ອຍກ່າວນັ້ນບໍ່ມີປະໂຫຍດ”

# ບົດທີ 25

## ບິນດັດບອກໂຢບວ່າມະນຸດບໍ່ສາມາດຮູ້ຈັກພຣະເຈົ້າໄດ້

1 ແລ້ວບິນດັດຄົນຊູອາຕອບວ່າ
2 “ພຣະເຈົ້າໄດ້ອຳນາດໃນການປົກຄອງ ແລະໃຫ້ຢຳເກງພຣະອົງ
ໄດ້ກະທຳສັນຕິພາບໃນສະຫວັນເບື້ອງສູງຂອງພຣະອົງ
3 ກອງທັບຂອງພຣະອົງມີຈຳນວນບໍ
ຄວາມສະຫວ່າງຂອງພຣະອົງບໍ່ໄດ້ສ່ອງມາເໜືອຜູ້ໃດ
4 ແລ້ວມະນຸດຈະຊອບທຳຕໍ່ພຣະພັກພຣະເຈົ້າໄດ້ຢ່າງໃດ
ຄົນທີ່ເກີດຈາກຜູ້ຍິງຈະບໍລິສຸດໄດ້ຢ່າງໃດ
5 ເບິ່ງແມ ເຖິງແມ່ນດວງເດືອນກໍບໍ່ມີຄວາມສຸກໃສ
ແລະດວງດາວກໍບໍ່ບໍລິສຸດໃນສາຍພຣະເນດຂອງພຣະອົງ
6 ຫລາຍກວ່ານັ້ນເທົ່າໃດ ມະນຸດຈະບໍລິສຸດ ຜູ້ເປັນພຽງຕົວໜອນ
ແລະລູກຂອງມະນຸດ ຜູ້ເປັນພຽງຕົວໜອນ”

# ບົດທີ 26

## ໂຢບກ່າວຊ້ຳວ່າເຈົ້າເຊື່ອໃນພຣະເຈົ້າ

1 ແລ້ວໂຢບຕອບວ່າ
2 “ເຈົ້າໄດ້ຊ່ວຍຜູ້ບໍ່ມີກຳລັງຢ່າງໃດ ແຂນທີ່ບໍ່ມີແຮງ
ເຈົ້າໄດ້ຊ່ວຍໃຫ້ພົ້ນໄດ້ຢ່າງໃດ

[3] ຄົນທີ່ບໍ່ມີສະຕິປັນຍາ ເຈົ້າໄດ້ສັ່ງສອນຢ່າງໃດ
ແລະໄດ້ສະແດງຄວາມເຂົ້າໃຈອັນບໍລິບູນຢ່າງໃດ
[4] ເຈົ້າໄດ້ກ່າວຖ້ອຍຄຳສຳລັບຜູ້ໃດ
ແລະລົມຫາຍໃຈທີ່ໄດ້ອອກມາຈາກເຈົ້າແມ່ນຂອງໃຜ
[5] ແດນຄົນຕາຍເບື້ອງລຸ່ມຕົກສະທ້ານໃຕ້ພື້ນນໍ້າ
ແລະທີ່ອາໃສຢູ່ໃນນໍ້ານັ້ນ
[6] ນາລົກກໍໄຂອອກຢູ່ຕໍ່ພຣະພັກ ພຣະເຈົ້າ
ແລະແດນມໍລະນາບໍ່ມີຜ້າບັງ
[7] ພຣະອົງໄດ້ຂຶງທາງເໜືອ ອອກປູບ່ອນທີ່ວ່າງເປົ່າ
ແລະແຂວນໂລກໄວ້ເໜືອບ່ອນທີ່ວ່າງເປົ່າ
[8] ພຣະອົງໄດ້ຫຸ້ມຫໍ່ນໍ້າໄວ້ໃນເມກທຶບຂອງພຣະອົງ
ແລະເມກນັ້ນກໍບໍ່ຂາດໄປ
[9] ພຣະອົງໄດ້ປົກບັງໜ້າແທ່ງພຣະທີ່ນັ່ງ
ແລະເອົາເມກຂອງພຣະອົງອອກປູມັນໄວ້
[10] ພຣະອົງໄດ້ຂີດໝາຍໄວ້ເທິງພື້ນນໍ້າເປັນເຂດແດນ
ລະຫວ່າງຄວາມສະຫວ່າງ ແລະຄວາມມືດ
[11] ເສົາຟ້າກໍຫວັ່ນໄຫວ
ແລະປະຫລາດໃຈເມື່ອພຣະອົງໄດ້ນາບຂູ່
[12] ພຣະອົງໄດ້ປາບທະເລໃຫ້ສະຫງົບດ້ວຍລິດທານຸພາບຂອງພຣະອົງ
ພຣະອົງໄດ້ຕີຄົນຈອງຫອງດ້ວຍຄວາມເຂົ້າພຣະໄທຂອງພຣະອົງ
[13] ພຣະອົງໄດ້ກະທຳໃຫ້ຟ້າສະຫວັນສ່ອງໃສດ້ວຍ ພຣະວິນຍານ ຂອງພຣະອົງ
ພຣະຫັດຂອງພຣະອົງໄດ້ແທງງູທີ່ກຳລັງໜີໄປ
[14] ເບິ່ງແມ ສິ່ງເຫລົ່ານີ້ເປັນພຽງພຣະລາຊະກິດບາງຢ່າງຂອງພຣະອົງ
ເຮົາໄດ້ຍິນເຖິງພຣະອົງກໍເປັນພຽງສຽງຊື່ມຄ່ອຍໆ
ໃຜຈະເຂົ້າໃຈເຖິງລິດທານຸພາບອັນຍິ່ງໃຫຍ່ຂອງພຣະອົງໄດ້”

# ບົດທີ 27

## ຄວາມຈິງໃຈຂອງໂຢບ

[1]ແລະ ໂຢບ ໄດ້ກ່າວກອນສຸພາສິດຂອງຕົນອີກວ່າ
[2] “ພຣະເຈົ້າ ມີພຣະຊົນຢູ່ແນ່ສັນໃດ
ຄືພຣະອົງຜູ້ໄດ້ນຳຄວາມຍຸດຕິທຳອັນຄວນເປັນຂອງຂ້ອຍໄປ
ແລະ ພຣະເຈົ້າ ອົງຜູ້ມີລິດອຳນາດຍິ່ງໃຫຍ່ມີພຣະຊົນຢູ່ແນ່ສັນໃດ
ຄືຜູ້ໄດ້ເຮັດໃຫ້ໃຈຂອງຂ້ອຍຂົມຂື່ນ

3 ຕາບໃດລົມຫາຍໃຈຍັງຢູ່ໃນຕົວຂ້ອຍ
ແລະຕາບໃດລົມຫາຍໃຈຈາກ ພຣະເຈົ້າ ຍັງຢູ່ໃນຮູດັງຂອງຂ້ອຍ
4 ຮີມປາກຂອງຂ້ອຍຈະບໍ່ເວົ້າຄວາມບໍ່ຈິງ
ແລະລີ້ນຂອງຂ້ອຍຈະບໍ່ເປົ່ງຄຳຕົວະ
5 ຈົ່ງເມີນເສີຍສາທີ່ຂ້ອຍຈະເວົ້າວ່າເຈົ້າຖືກ
ຂ້ອຍຈະບໍ່ຖິ້ມຄວາມສັດຈິງຂອງຂ້ອຍຈົນຂ້ອຍຕາຍ
6 ຂ້ອຍຍຶດຄວາມຊອບທຳຂອງຂ້ອຍໃຫ້ໝັ້ນຄົງ
ບໍ່ຍອມປ່ອຍໄປ ຈິດໃຈຂອງຂ້ອຍບໍ່ຕຳໜິຂ້ອຍ ບໍ່ວ່າວັນໃດໃນຊີວິດຂອງຂ້ອຍ
7 ຂໍໃຫ້ສັດຕູຂອງຂ້ອຍເປັນເໝືອນຄົນຊົ່ວ
ແລະຂໍໃຫ້ຜູ້ທີ່ລຸກຂຶ້ນຕໍ່ສູ້ຂ້ອຍເປັນເໝືອນຄົນອະທຳ

## ຄົນໜ້າຊື່ໃຈຄົດຂາດຄວາມຫວັງ

8 ເພາະອັນໃດຈະເປັນຄວາມຫວັງຂອງຄົນໜ້າຊື່ໃຈຄົດເຖິງວ່າລາວໄດ້ກຳໄລແລ້ວ
ເມື່ອ ພຣະເຈົ້າ ໄດ້ເອົາຊີວິດຂອງລາວໄປ
9 ພຣະເຈົ້າ ຈະໄດ້ຟັງສຽງຮ້ອງຂອງລາວບໍ
ເມື່ອຄວາມຍາກລຳບາກມາສູ່ລາວ
10 ລາວຈະປິຕິຍິນດີໃນ ພຣະເຈົ້າ ອົງຜູ້ມີລິດອຳນາດອັນໃຫຍ່
ທີ່ສຸດບໍ ລາວຈະກາບທູນ ພຣະເຈົ້າ ທຸກເວລາບໍ
11 ຂ້ອຍຈະສັ່ງສອນເຈົ້າທັງຫລາຍໂດຍພຣະຫັດຂອງ ພຣະເຈົ້າ
ຂ້ອຍຈະບໍ່ປິດບັງພຣະດຳລິຂອງ ພຣະເຈົ້າ ອົງຜູ້ມີລິດອຳນາດອັນຍິ່ງໃຫຍ່
12 ເບິ່ງແມ ເຈົ້າທຸກຄົນໄດ້ເຫັນເອງແລ້ວ
ເປັນຫຍັງເຈົ້າຈຶ່ງເວົ້າຈາແບບແຫລວໄຫລເຊັ່ນນີ້
13 ສ່ວນຂອງຄົນຊົ່ວທີ່ ພຣະເຈົ້າ ຈະໃຫ້ມຸ່ງໄປກັບ
ມໍລະດົກ ຊຶ່ງຜູ້ບີບບັງຄັບຈະໄດ້ຮັບຈາກ ພຣະເຈົ້າ ອົງຜູ້ມີລິດອຳນາດ
14 ຖ້າລູກຫລານຂອງລາວເພີ່ມຂຶ້ນ ກໍເພື່ອຖືກດາບ
ແລະລູກຫລານຂອງລາວກໍຫາບໍ່ພໍກິນ
15 ຄົນຂອງລາວທີ່ເຫລືອຢູ່ ຄວາມຕາຍກໍຈະຝັງພວກເຂົາເສຍ
ແລະແມ່ໝ້າຍທັງຫລາຍຂອງພວກເຂົາຈະບໍ່ຮ້ອງຄາງ
16 ເຖິງລາວຈະກອບໂກຍເອົາເງິນໄວ້ຫລາຍເໝືອນຂີ້ຝຸ່ນດິນ
ແລະກອງເສື້ອຜ້າໄວ້ດັ່ງດິນໜຽວ
17 ລາວຈະກອງໄວ້ກໍໄດ້ ແຕ່ຄົນຊອບທຳຈະໃສ່
ແລະຄົນບໍ່ມີຄວາມຜິດຈະແບ່ງເງິນກັນ
18 ລາວສ້າງເຮືອນເໝືອນຢ່າງຕົວມອດ
ຄືກະຕູບທີ່ຄົນຍາມສ້າງ

19 ຄົນຮັ່ງມີຈະນອນລົງ ແຕ່ລາວຈະບໍ່ຖືກຮວບຮວມໄວ້
ລາວມືນຕາຂອງລາວຂຶ້ນ ແລະລາວບໍ່ຢູ່ແລ້ວ
20 ຄວາມຢ້ານກົວມາທັບລາວເໝືອນນ້ຳໄຫລ
ໃນກາງຄືນພາຍຸຫອບລາວໄປ
21 ລົມຕາເວັນອອກຫອບລາວຂຶ້ນ ແລະລາວກໍຈາກໄປ
ເໝືອນພາຍຸທີ່ກວາດລາວອອກໄປຈາກບ່ອນຂອງລາວ
22 ພຣະເຈົ້າຈະໄດ້ໂຍນລາວຢ່າງບໍ່ປານີ
ລາວຈະໜີຈາກພຣະຫັດຂອງພຣະອົງ
23 ຄົນຈະຕົບມືເຍາະເຍີ້ຍລາວ
ແລະຈະຂັບໄລ່ລາວອອກໄປຈາກບ່ອນຂອງລາວ"

# ບົດທີ 28

## ສະຕິປັນຍາແມ່ນຂອງປະທານຈາກພຣະເຈົ້າ

1 "ເຫດວ່າມີເໝືອງສຳລັບແຮ່ເງິນ
ແລະມີທີ່ສຳລັບຄຳທີ່ພວກເຂົາເອົາໄປ
2 ພວກເຂົາເອົາເຫລັກມາຈາກພື້ນດິນ
ແລະເອົາທອງເຫລືອງມາຈາກແຮ່ດິບ
3 ມະນຸດກຳຈັດຄວາມມືດ ແລະຄົ້ນຫາໄປຍັງເຂດໄກທີ່ສຸດ
ຄົ້ນຫາແຮ່ດິບໃນບ່ອນທີ່ມືດຄຶ້ມ ແລະເງົາມັດຈຸລາດ
4 ພວກເຂົາຂຸດປ່ອງບໍ່ໄກຈາກບ້ານຄົນອາໄສຢູ່ ຄົນທ່ຽວໄປມາລືມພວກເຂົາແລ້ວ
ພວກເຂົາແຂວນຢູ່ແກວ່ງໄປແກວ່ງມາໄກຈາກຝູງຄົນ
5 ຝ່າຍແຜ່ນດິນນັ້ນມີອາຫານອອກມາ
ແລະທາງລຸ່ມດິນມັນທຳລາຍເໝືອນໄຟໄໝ້
6 ກ້ອນຫີນຂອງບ່ອນນັ້ນເປັນບ່ອນຢູ່ຂອງແກ້ວໄພທູນ
ແລະມັນມີຂີ້ຝຸ່ນຄຳ
7 ບໍ່ມີນົກໂຕໃດຮູ້ຈັກທາງນັ້ນ
ແລະຕານົກກໍເບິ່ງບໍ່ເຫັນ
8 ລູກໂຕສິງບໍ່ເຄີຍຍ່າງບ່ອນນັ້ນ
ໂຕສິງໂຫດຮ້າຍບໍ່ຜ່ານມາບ່ອນນັ້ນ
9 ຄົນຍື່ນມືທີ່ຫີນແຂງ
ແລະທຳລາຍພູເຂົາລົງເຖິງຮາກ
10 ລາວຂຸດຮ່ອງໄວ້ໃນຫີນ
ແລະຕາຂອງລາວເຫັນຂອງປະເສີດທຸກຢ່າງ

11 ລາວກັນນ້ຳໄວ້ ເພື່ອບໍ່ໃຫ້ມີນ້ຳຍ້ອຍ
ແລະສິ່ງທີ່ປິດບັງໄວ້ ລາວນຳມາໃຫ້ແຈ້ງ
12 ແຕ່ຈະພົບສະຕິປັນຍາບ່ອນໃດ
ແລະບ່ອນຂອງຄວາມເຂົ້າໃຈຢູ່ທີ່ໃດ
13 ມະນຸດບໍ່ຮູ້ຈັກຄ່າຂອງສະຕິປັນຍາ
ແລະໃນແຜ່ນດິນຂອງຄົນເປັນກໍຫາບໍ່ພົບ
14 ບາດານເວົ້າວ່າ 'ທີ່ຂ້ອຍບໍ່ມີ'
ແລະທະເລກ່າວວ່າ 'ບໍ່ຢູ່ກັບຂ້ອຍ'
15 ຈະເອົາຄຳຊື້ກໍບໍ່ໄດ້
ແລະຈະຊັ່ງເງິນໃຫ້ຕາມລາຄາກໍບໍ່ໄດ້
16 ຈະຕີລາຄາເປັນຄຳໂອຟີກໍບໍ່ໄດ້
ຫລືເປັນພອຍສີນ້ຳເຂົ້າປະເສີດ ຫລືແກ້ວໄພທູນກໍບໍ່ໄດ້
17 ຈະທຽບເທົ່າຄຳ ແລະແກ້ວບໍລິສຸດກໍບໍ່ໄດ້
ຫລືຈະແລກປ່ຽນກັບເຄື່ອງຄຳບໍລິສຸດໜ່ວຍໜຶ່ງກໍບໍ່ໄດ້
18 ຢ່າເອີ່ຍເຖິງຫີນປະກາລັງ ແລະໄຂ່ມຸກເລີຍ
ຄ່າຂອງສະຕິປັນຍາສູງກວ່າມຸກດາ
19 ເພັດພອຍນ້ຳໜຶ່ງຂອງເມືອງເອທີໂອເປຍ
ກໍປຽບກັບສະຕິປັນຍາບໍ່ໄດ້ ຫລືຈະຕີລາຄາເປັນຄຳບໍລິສຸດກໍບໍ່ໄດ້
20 ດັ່ງນັ້ນ ສະຕິປັນຍາມາຈາກໃສ
ແລະບ່ອນຂອງຄວາມເຂົ້າໃຈຢູ່ທີ່ໃດ
21 ເປັນສິ່ງທີ່ເຊື່ອງພົ້ນຈາກຕາຂອງສິ່ງທີ່ມີຊີວິດທັງປວງ
ແລະປິດບັງໄວ້ຈາກນົກໃນອາກາດ
22 ຄວາມຈິບຫາຍກັບຄວາມຕາຍກ່າວວ່າ
'ເຮົາໄດ້ຍິນສຽງຊ່າລືເລື່ອງສະຕິປັນຍາກັບຫູຂອງເຮົາ'
23 ພຣະເຈົ້າໄດ້ຮູ້ທາງໄປຫາສະຕິປັນຍານັ້ນ
ແລະພຣະອົງໄດ້ຮູ້ທີ່ຢູ່ຂອງສະຕິປັນຍາດ້ວຍ
24 ເພາະພຣະອົງທອດພຣະເນດໄປເຖິງທີ່ສຸດປາຍແຜ່ນດິນໂລກ
ແລະໄດ້ເຫັນທຸກສິ່ງທີ່ໃຕ້ຟ້າສະຫວັນ
25 ໃນເມື່ອພຣະອົງໄດ້ກຳນົດນ້ຳໜັກໃຫ້ແກ່ລົມ
ແລະໄດ້ກະນ້ຳດ້ວຍເຄື່ອງຜອງ
26 ເມື່ອພຣະອົງໄດ້ສ້າງກົດໝາຍໃຫ້ຝົນ
ແລະສ້າງທາງໄວ້ໃຫ້ແສງຟ້າຜ່າຂອງຟ້າຜ່າ
27 ແລ້ວພຣະອົງທອດພຣະເນດສະຕິປັນຍາ ແລະໄດ້ປະກາດ

ໄດ້ສະຖາປະນາໄວ້ ແລະໄດ້ລອງເບິ່ງດ້ວຍ
28 ພຣະອົງກ່າວກັບມະນຸດວ່າ 'ເບິ່ງແມ ຄວາມຢຳເກງອົງພຣະຜູ້ເປັນເຈົ້ານັ້ນແຫລະ
ຄືສະຕິປັນຍາ ແລະການຫັນໜີຈາກຄວາມຊົ່ວກໍແມ່ນ ຄືຄວາມເຂົ້າໃຈ'"

# ບົດທີ 29

## ໂຢບຕອບຄຳຟ້ອງທີ່ຜິດ

1 ແລ້ວໂຢບກໍກ່າວກອນສຸພາສິດຂອງຕົນອີກວ່າ
2 "ໂອ ຂ້ອຍຢາກຈະຢູ່ຄືແຕ່ລະເດືອນທີ່ຜ່ານໄປ
ຄືໃນສະໄໝເມື່ອພຣະເຈົ້າໄດ້ຮັກສາຂ້ອຍ
3 ເມື່ອຕະກຽງຂອງພຣະອົງສ່ອງໃສ່ເທິງຫົວຂ້ອຍ
ແລະຂ້ອຍຍ່າງຝ່າຄວາມມືດໄປດ້ວຍຄວາມສະຫວ່າງຂອງພຣະອົງ
4 ຄືຂ້ອຍເມື່ອຕອນຍັງໜຸ່ມແໜ້ນຢູ່
ເມື່ອຄວາມເລິກລັບຂອງພຣະເຈົ້າໄດ້ຢູ່ເໜືອເຕັນຂອງຂ້ອຍ
5 ເມື່ອພຣະເຈົ້າອົງຜູ້ມີລິດອຳນາດຍັງຢູ່ກັບຂ້ອຍ
ແລະລູກຫລານຫ້ອມລ້ອມຂ້ອຍ
6 ເມື່ອພວກເຂົາລ້າງທາງຍ່າງຂອງຂ້ອຍດ້ວຍນົມ
ແລະກ້ອນຫີນຖອກນ້ຳມັນອອກໃຫ້ຂ້ອຍ
7 ເມື່ອຂ້ອຍອອກມາຍັງປະຕູເມືອງ
ເມື່ອຂ້ອຍຕຽມບ່ອນນັ່ງຂອງຂ້ອຍຕາມຖະໜົນ
8 ຄົນໜຸ່ມເຫັນຂ້ອຍແລ້ວກໍຫລີກໄປ
ຄົນສູງອາຍຸລຸກຂຶ້ນຢືນຢູ່
9 ເຈົ້ານາຍຢຸດເວົ້າ
ເອົາມືປິດປາກຂອງຕົນໄວ້
10 ສຽງຂອງຂ້າລາຊະການກໍສະຫງົບລົງ
ແລະລີ້ນຂອງພວກເຂົາກໍຕິດເພດານປາກ
11 ເມື່ອຫູໄດ້ຍິນແລ້ວ ຕ່າງກໍວ່າຂ້ອຍເປັນສຸກ
ແລະເມື່ອຕາເບິ່ງ ກໍຍົກຍ້ອງຂ້ອຍ
12 ເພາະວ່າຂ້ອຍຊ່ວຍຄົນຍາກຈົນທີ່ຮ້ອງໃຫ້ຊ່ວຍ
ແລະເດັກກຳພ້າພໍ່ທີ່ບໍ່ມີໃຜອຸບປະຖຳເຂົາ
13 ພອນຂອງຄົນທີ່ໃກ້ຈິບຫາຍໄປກໍມາເຖິງຂ້ອຍ
ແລະຂ້ອຍເປັນເຫດໃຫ້ຈິດໃຈຂອງແມ່ໝ້າຍຮ້ອງເພງດ້ວຍຄວາມຊື່ນບານ
14 ຂ້ອຍເອົາຄວາມຊອບທຳ ແລະມັນກໍຫົ່ມຂ້ອຍໄວ້
ຄວາມຍຸດຕິທຳຂອງຂ້ອຍເໝືອນເສື້ອຄຸມ ແລະຜ້າຄຽນຫົວ

15 ຂ້ອຍເປັນຕາໃຫ້ຄົນຕາບອດ
ແລະເປັນຕີນໃຫ້ຄົນງ່ອຍ
16 ຂ້ອຍເປັນພໍ່ໃຫ້ຄົນຂັດສົນ
ແລະຂ້ອຍພິຈາລະນາເລື່ອງຂອງຜູ້ທີ່ຂ້ອຍບໍ່ຮູ້ຈັກ
17 ຂ້ອຍຫັກກະດູກຄາງຂອງຄົນຊົ່ວ
ແລະໄດ້ດຶງເອົາເຫຍື່ອຈາກແຂ້ວຂອງລາວ
18 ແລ້ວຂ້ອຍຄິດວ່າ ‘ຂ້ອຍຈະຕາຍໃນຮັງຂອງຂ້ອຍ
ແລະຂ້ອຍຈະເພີ່ມທະວີວັນເວລາຂອງຂ້ອຍເໝືອນດິນຊາຍ
19 ຮາກຂອງຂ້ອຍຈະແຜ່ໄປເຖິງນໍ້າ
ມີນໍ້າໝອກເທິງກິ່ງຂອງຂ້ອຍຕະຫລອດຄືນ
20 ສະຫງ່າລາສີຂອງຂ້ອຍສົດຊື່ນຢູ່ກັບຂ້ອຍ
ແລະຄັນທະນູຂອງຂ້ອຍໃໝ່ສະເໝີຢູ່ໃນມືຂ້ອຍ’
21 ຄົນທັງຫລາຍຫງ່ງງຫູຟັງຂ້ອຍ ແລະຄອຍຖ້າຢູ່
ແລະງຽບຢູ່ ຟັງຄຳສັ່ງສອນຂອງຂ້ອຍ
22 ຫລັງຈາກທີ່ຂ້ອຍເວົ້າແລ້ວ ພວກເຂົາກໍບໍ່ເວົ້າອີກເລີຍ
ແລະຄຳຂອງຂ້ອຍກໍຕົກລົງມາເທິງພວກເຂົາ
23 ພວກເຂົາຄອຍຖ້າຂ້ອຍເໝືອນຄອຍຖ້າຝົນ
ພວກເຂົາອ້າປາກຂອງຕົນເໝືອນລໍຖ້າຮັບນໍ້າຝົນຕົກທ້າຍລະດູ
24 ຖ້າຂ້ອຍຊົມຊື່ນຍິນດີຕໍ່ພວກເຂົາ ພວກເຂົາກໍບໍ່ເຊື່ອ
ແລະໃບໜ້າຍິ້ມແຍ້ມຂອງຂ້ອຍ ພວກເຂົາບໍ່ໄດ້ເຮັດໃຫ້ໝົ່ນໝອງ
25 ຂ້ອຍເລືອກທາງໃຫ້ພວກເຂົາ ແລະນັ່ງເປັນຫົວໜ້າ
ແລະຢູ່ຢ່າງກະສັດທ່າມກາງກອງທະຫານ ເໝືອນຜູ້ທີ່ເລົ້າໂລມຄົນຮ້ອງຄາງ”

# ບົດທີ 30

## ຄວາມຮັ່ງມີຂອງໂຢບກາຍເປັນຄວາມຍາກຈົນ

1 “ແຕ່ດຽວນີ້ ພວກເຂົາເຍາະເຍີ້ຍຂ້ອຍ ຄືຄົນທີ່ໜຸ່ມກວ່າຂ້ອຍ
ຄົນທີ່ຂ້ອຍຈະດູໝິ່ນພໍ່ຂອງພວກເຂົາ
ເຖິງກັບບໍ່ຍອມໃຫ້ຢູ່ກັບໝາທີ່ເຝົ້າຝູງແບ້ແກະຂອງຂ້ອຍ
2 ຂ້ອຍຈະໄດ້ຫຍັງຈາກກຳລັງມືຂອງພວກເຂົາທັງຫລາຍ
ຄືຂອງຄົນທີ່ບໍ່ມີເຫື່ອແຮງແລ້ວ
3 ເພາະເຫດຄວາມອຶດຢາກ ແລະຫິວໂຫຍ ພວກເຂົາຢູ່ແຕ່ຄົນດຽວ
ເມື່ອກ່ອນພວກເຂົາໜີໄປຍັງຖິ່ນແຫ້ງແລ້ງກັນດານຊຶ່ງຮ້າງແຕ່ດົນແລ້ວ
4 ພວກເຂົາເກັບຜັກທ່າມກາງພຸ່ມໄມ້

ແລະເອົາຮາກຕົ້ນຊາມາເປັນອາຫານ
[5] ພວກເຂົາຖືກຂັບໄລ່ອອກໄປຈາກທ່າມກາງຄົນ
(ມີຄົນຮ້ອງຕາມພວກເຂົາໄປເໝືອນຕາມໂຈນ)
[6] ສະນັ້ນ ພວກເຂົາຕ້ອງພັກຢູ່ທີ່ແຄມນໍ້າ
ໃນຮູຢູ່ໃນດິນແລະຫລືບຫີນ
[7] ພວກເຂົາຮ້ອງຢູ່ທ່າມກາງພຸ່ມໄມ້
ພວກເຂົາແຫຍ້ກັນຢູ່ພາຍໃຕ້ຕົ້ນຫຍ້າ
[8] ພວກເຂົາເປັນລູກຂອງຄົນຖ່ອຍ ແລະເປັນລູກຂອງຄົນເສຍຊື່
ພວກເຂົາຖືກກວາດອອກໄປຈາກແຜ່ນດິນ
[9] ແລະບັດນີ້ ຂ້ອຍກາຍເປັນເພງເຍາະເຍີ້ຍຂອງພວກເຂົາ
ແລະ ຂ້ອຍເປັນບ່ອນນິນທາຂອງພວກເຂົາ
[10] ພວກເຂົາທັງຫລາຍກຽດຊັງຂ້ອຍ ແລະຫ່າງໄກຈາກຂ້ອຍ
ພວກເຂົາຖົ່ມນໍ້າລາຍໃສ່ໜ້າຂອງຂ້ອຍ
[11] ເພາະ **ພຣະເຈົ້າ** ໄດ້ແກ້ສາຍທະນູຂອງຂ້ອຍ ແລະໃຫ້ຂ້ອຍຕົກຕໍ່າ
ພວກເຂົາທັງຫລາຍໄດ້ປະຖິ້ມຄວາມອົດທົນທຸກຢ່າງຕໍ່ໜ້າຂ້ອຍ
[12] ຄົນໜຸ່ມລຸກຂຶ້ນຂ້າງຂວາມືຂອງຂ້ອຍ ພວກເຂົາຊຸກຕີນຂອງຂ້ອຍອອກໄປ
ແລະຈັດແຈງທາງອຸບາຍໄວ້ຕໍ່ສູ້ຂ້ອຍ
[13] ພວກເຂົາທຳລາຍຫົນທາງຂອງຂ້ອຍ ພວກເຂົາເຂົ້າສ່ວນເຮັດໃຫ້ຂ້ອຍຕ້ອງຕາຍ
ບໍ່ມີຜູ້ໃດຕ້ານທານພວກເຂົາໄວ້ເລີຍ
[14] ພວກເຂົາມາເໝືອນກັບມາທາງປ່ອງກວ້າງ
ພວກເຂົາແລ່ນເຂົ້າມາທ່າມກາງສຽງອຶກກະທຶກ
[15] ຄວາມຢ້ານກົວຕ່າງໆຫັນມາໃສ່ຂ້ອຍ
ຈິດໃຈຂອງຂ້ອຍຖືກພວກເຂົາຕິດຕາມເໝືອນລົມ
ແລະຄວາມຈະເລີນຮຸ່ງເຮືອງຂອງຂ້ອຍສູນເສຍໄປເໝືອນເມກ
[16] ບັດນີ້ຈິດໃຈຂອງຂ້ອຍກໍໄຫລອອກພາຍໃນຂ້ອຍໄປ
ວັນເວລາຂອງຄວາມທຸກໃຈຈັບຕົວຂ້ອຍໄວ້
[17] ກາງຄືນກໍເຈາະກະດູກຂ້ອຍ
ແລະຄວາມເຈັບປວດທີ່ກັດກິນຂ້ອຍນັ້ນກໍບໍ່ຢຸດພັກເລີຍ
[18] ເຄື່ອງແຕ່ງກາຍຂອງຂ້ອຍເສຍຮູບໄປດ້ວຍຄວາມຮຸນແຮງຂອງພະຍາດນີ້
ມັນມັດຂ້ອຍເໝືອນເສື້ອຜ້າຮັດຄໍຂ້ອຍ
[19] **ພຣະເຈົ້າ** ໄດ້ໂຍນຂ້ອຍລົງໃນຂີ້ຕົມ
ແລະຂ້ອຍກໍກາຍເປັນຄືຂີ້ຝຸ່ນດິນ ແລະຂີ້ເທົ່າໄຟ
[20] ຂ້ານ້ອຍຮ້ອງທູນພຣະອົງ ແລະພຣະອົງບໍ່ໄດ້ຮັບຟັງຂ້ານ້ອຍ

ຂ້ານ້ອຍຢືນຂຶ້ນ ແລະພຣະອົງບໍ່ໄດ້ເບິ່ງ
21 ພຣະອົງກັບໂຫດຮ້າຍຕໍ່ຂ້ານ້ອຍ ພຣະອົງໄດ້ຕໍ່ຕ້ານຂ້ານ້ອຍ
ດ້ວຍພຣະຫັດອັນມີລິດອຳນາດຂອງພຣະອົງ
22 ພຣະອົງໄດ້ຍົກຂ້ານ້ອຍຂຶ້ນເທິງລົມ ແລະໄດ້ໃຫ້ລົມພັດຂ້ານ້ອຍໄປ
ແລະໄດ້ໃຫ້ຕົວຂ້ານ້ອຍເປື່ອຍໄປ
23 ຂ້ານ້ອຍຮູ້ແລ້ວວ່າພຣະອົງຈະໃຫ້ຂ້ານ້ອຍຕາຍເສຍ
ແລະໃຫ້ໄປສູ່ບ່ອນກຳນົດຂອງຄົນເປັນທັງປວງ
24 ເຖິງປານນັ້ນລາວຈະບໍ່ຢຽດມືຂອງລາວອອກຊ່ວຍຄົນໃນແດນຄົນຕາຍບໍ
ເຖິງແມ່ນວ່າພວກເຂົາຮ້ອງຂໍຄວາມຊ່ວຍເຫລືອໃນທ່າມກາງໄພພິບັດຂອງພວກເຂົາ
25 ຂ້ອຍບໍ່ໄດ້ຮ້ອງໄຫ້ເພື່ອຜູ້ທີ່ຖືກການທຸກຍາກເຂັ້ນໃຈຂອງເຂົາບໍ
ຈິດໃຈຂອງຂ້ອຍບໍ່ໄດ້ທຸກໂສກເພື່ອຄົນຂັດສົນບໍ
26 ແຕ່ເມື່ອຂ້ອຍຊອກຫາການດີ ການຮ້າຍກໍມາເຖິງ
ແລະເມື່ອຂ້ອຍຄອຍຖ້າຄວາມສະຫວ່າງ ຄວາມມືດກໍມາເຖິງ
27 ຈິດໃຈຂອງຂ້ອຍຮ້ອນຮົນບໍ່ເຄີຍສະຫງົບເລີຍ
ວັນຂອງຄວາມທຸກໃຈມາພົບຂ້ອຍ
28 ຂ້ອຍໄດ້ໄວ້ທຸກ ບໍ່ແມ່ນດ້ວຍແດດ ຂ້ອຍຢືນຂຶ້ນໃນທີ່ຊຸມນຸມຊົນ
ແລະຮ້ອງຂໍຄວາມຊ່ວຍເຫລືອ
29 ຂ້ອຍເປັນພີ່ນ້ອງກັບຝູງໝາໃນ
ແລະເປັນເພື່ອນກັບນົກກະຈອກເທດ
30 ຜິວໜັງຂອງຂ້ອຍດຳ
ກະດູກຂອງຂ້ອຍຮ້ອນເໝືອນໄຟໄໝ້
31 ເພາະສະນັ້ນ ສຽງພິນຄູ່ຂອງຂ້ອຍກາຍເປັນສຽງຄວາມທຸກໂສກ
ແລະສຽງຂຸ່ຍຂອງຂ້ອຍກາຍເປັນສຽງຂອງຜູ້ທີ່ຮ້ອງໄຫ້”

# ບົດທີ 31

1 ຂ້ອຍໄດ້ສັນຍາຢ່າງເດັດຂາດ
ວ່າຈະບໍ່ເບິ່ງຍິງສາວດ້ວຍລາຄະຕັນຫາຈັກເທື່ອ.
2 ພຣະເຈົ້າຜູ້ມີອຳນາດຍິ່ງໃຫຍ່ຊົງໂຜດປະທານອັນໃດແກ່ເຮົາ
ພຣະອົງຊົງໃຫ້ອັນໃດຕອບແທນການກະທຳຂອງມະນຸດ.
3 ພຣະອົງໄດ້ສົ່ງໄພພິບັດ
ແລະການທຳລາຍມາຍັງຜູ້ທີ່ເຮັດຜິດ.
4 ພຣະເຈົ້າຊົງຮູ້ທຸກສິ່ງທີ່ຂ້ອຍເຮັດ
ແລະຊົງເຫັນຂ້ອຍຍ່າງໄປທຸກບາດຕີນບໍ່ແມ່ນຫລື.

5 ຂ້ອຍສາບານໄດ້ວ່າຂ້ອຍບໍ່ເຄີຍເຮັດຊົ່ວ
ແລະບໍ່ເຄີຍຫລອກລວງຄົນອື່ນ.
6 ຂໍພຣະເຈົ້າຊົງຊັ່ງເບິ່ງຂ້ອຍດ້ວຍຕາຊັ່ງອັນຖືກຕ້ອງ
ແລະພຣະອົງຈະຮູ້ວ່າຂ້ອຍບໍລິສຸດພຽງໃດ.
7 ຖ້າຂ້ອຍຫັນຫລັງໃຫ້ທາງຊອບທຳ
ຫລືປ່ອຍຕົວເອງໄປຕາມທາງຊົ່ວ
ຖ້າມືຂອງຂ້ອຍເປິເປື້ອນດ້ວຍບາບ.
8 ກໍຂໍໃຫ້ເຄື່ອງປູກຂອງຂ້ອຍຖືກທຳລາຍ
ຫລືໃຫ້ຄົນອື່ນໆກິນໝາກຜົນທີ່ຂ້ອຍປູກ.
9 ຖ້າຂ້ອຍມີຄວາມຮັກໄຄ່ຫລົງໃຫລໃນເມຍຂອງເພື່ອນບ້ານ
ແລະຄອຍຈອບລີ້ຢູ່ນອກປະຕູເຮືອນຂອງນາງ.
10 ກໍຂໍໃຫ້ເມຍຂອງຂ້ອຍຮັບໃຊ້ຄົວກິນໃນເຮືອນຂອງຊາຍອື່ນ
ແລະໃຫ້ຊາຍອື່ນນອນນຳລາວ.
11 (ເພາະການເຮັດຜິດຢ່າງນີ້ ຊົ່ວຮ້າຍຫລາຍ
ຈະຕ້ອງຖືກໂທດເຖິງຕາຍ.
12 ຖ້າຂ້ອຍເຮັດຜິດຢ່າງນີ້ ມັນຈະເປັນຄືໄພພິບັດ
ແລະໄຟນະລົກເຜົາຜານທຸກສິ່ງທີ່ຂ້ອຍມີ).
13 ເມື່ອຄົນໃຊ້ຄົນໃດຄົນໜຶ່ງຂອງຂ້ອຍຮ້ອງທຸກຕໍ່ຂ້ອຍ
ຂ້ອຍກໍຟັງ ແລະເຮັດຕໍ່ລາວໂດຍດີ.
14 ຖ້າບໍ່ເຮັດດັ່ງນັ້ນ ຂ້ອຍຈະປິ່ນໜ້າສູ່ພຣະວິຫານພຣະເຈົ້າຢ່າງໃດ
ຂ້ອຍຈະເວົ້າແນວໃດເມື່ອພຣະອົງສະເດັດມາພິພາກສາ.
15 ເພາະແມ່ນພຣະເຈົ້າອົງດຽວນີ້ແຫລະ
ທີ່ຊົງສ້າງຂ້ອຍກັບຄົນໃຊ້ຂອງຂ້ອຍ.
16 ຂ້ອຍບໍ່ເຄີຍປະຕິເສດໃຫ້ຄວາມຊ່ວຍເຫລືອຄົນຍາກຈົນ
ບໍ່ເຄີຍໃຫ້ພວກແມ່ໝ້າຍຢູ່ດ້ວຍຄວາມໝົດຫວັງ.
17 ຫລືບໍ່ເຄີຍໃຫ້ລູກກຳພ້າຫິວເມື່ອຂ້ອຍມີອາຫານ.
18 ຂ້ອຍໄດ້ເອົາໃຈໃສ່ດູແລພວກເຂົາຕະຫລອດຊີວິດຂອງຂ້ອຍ.
19 ເມື່ອຂ້ອຍພົບຄົນໜຶ່ງຄົນໃດທີ່ຂາດແຄນບໍ່ມີເຄື່ອງນຸ່ງ.
20 ຂ້ອຍກໍຈະເອົາເຄື່ອງນຸ່ງທີ່ເຮັດດ້ວຍຂົນແກະຂອງຂ້ອຍເອງໃຫ້ລາວ
ແລ້ວລາວກໍກ່າວສັນລະເສີນຂ້ອຍດ້ວຍຄວາມເຕັມໃຈ.
21 ຖ້າຂ້ອຍເຄີຍສໍ້ໂກງລູກກຳພ້າ
ຍ້ອນເຊື່ອວ່າຈະຊະນະຄະດີເຂົາໃນສານ.
22 ກໍຂໍໃຫ້ລຳແຂນຂອງຂ້ອຍແຕກຫັກ

ໃຫ້ມັນຫລຸດອອກຈາກບ່າຂອງຂ້ອຍເສຍ.
23 ຂ້ອຍບໍ່ເຄີຍປະພຶດເຊັ່ນນັ້ນ
ເພາະວ່າຂ້ອຍຢ້ານກົວການລົງໂທດຂອງ ພຣະເຈົ້າ.
24 ຂ້ອຍບໍ່ເຄີຍໄວ້ວາງໃຈໃນເງິນຄຳ.
25 ຫລືພາກພູມໃຈໃນເງິນຄຳ.
26 ຂ້ອຍບໍ່ເຄີຍຂາບໄຫວ້ດວງອາທິດສ່ອງແສງ
ຫລືດວງຈັນເຕັມດວງ.
27 ແມ່ນແຕ່ຄຶດຈະເຮັດຊົ່ວຂ້ອຍກໍບໍ່ເຄີຍ.
28 ການເຮັດບາບເຊັ່ນນັ້ນຈະຕ້ອງຖືກໂທດເຖິງຕາຍ
ເພາະເປັນການປະຕິເສດຜູ້ມີອຳນາດຍິ່ງໃຫຍ່.
29 ຂ້ອຍບໍ່ເຄີຍດີໃຈເມື່ອສັດຕູເປັນທຸກ
ຫລືເມື່ອພວກເຂົາປະສົບໄພພິບັດ.
30 ຂ້ອຍບໍ່ເຄີຍເຮັດບາບດ້ວຍການສາບແຊ່ງໃຫ້ສັດຕູຕາຍ.
31 ຄົນງານຂອງຂ້ອຍທັງໝົດຮູ້ຈັກດີ
ວ່າຂ້ອຍຍິນດີຕ້ອນຮັບຄົນຕ່າງຖິ່ນສະເໝີ.
32 ຂ້ອຍຍິນດີຕ້ອນຮັບຄົນເດີນທາງທີ່ມາເຮືອນຂອງຂ້ອຍ
ແລະຂ້ອຍບໍ່ເຄີຍໃຫ້ພວກເຂົານອນຢູ່ຕາມທາງ.
33 ຄົນອື່ນທັງຫລາຍພະຍາຍາມປິດບັງບາບຂອງຕົນໄວ້
ແຕ່ຂ້ອຍບໍ່ເຄີຍປິດບັງເລີຍ.
34 ຂ້ອຍບໍ່ເຄີຍຢ້ານກົວຝູງຊົນນິນທາ
ຂ້ອຍບໍ່ເຄີຍມິດງຽບຢູ່ໃນເຮືອນ
ຍ້ອນຢ້ານພວກເຂົາກຽດຊັງ.
35 ບໍ່ມີໃຜຈັກຄົນຫລືທີ່ຈະຟັງຂ້ອຍເວົ້າ
ຂ້ອຍສາບານໄດ້ວ່າຄຳເວົ້າທຸກຄຳຂອງຂ້ອຍເປັນຄວາມຈິງ
ຂໍໃຫ້ພຣະເຈົ້າຜູ້ມີອຳນາດຍິ່ງໃຫຍ່ຊົງຕອບຂ້ອຍ.
36 ຂ້ອຍຈະເອົາປະດັບໄວ້ຮອບໆຄໍດ້ວຍຄວາມພາກພູມໃຈ
ແລະຍົກມັນຂຶ້ນໃຫ້ທຸກໆຄົນເຫັນ.
37 ຂ້ອຍຈະກາບທູນ ພຣະເຈົ້າ ທຸກສິ່ງທີ່ຂ້ອຍເຮັດ
ແລະຢູ່ຕໍ່ໜ້າພຣະອົງດ້ວຍຄວາມກ້າຫານ.
38 ຖ້ານາທີ່ຂ້ອຍເຮັດຢູ່ນີ້
ໄດ້ຍຶດເອົາມາຈາກຄົນອື່ນ.
39 ຖ້າຂ້ອຍໄດ້ກິນໝາກຜົນທີ່ພວກເຂົາປູກ
ແຕ່ໃຫ້ເຈົ້າຂອງນາອຶດຢາກ.

40 ກໍຂໍໃຫ້ຫຍ້າ ແລະໄມ້ມີໜາມ
ງອກຂຶ້ນແທນເຂົ້າເບເລ ແລະເຂົ້າເດືອຍຂອງຂ້ອຍ
ຈົບຄຳເວົ້າຂອງ ໂຢບ.

# ບົດທີ 32

## ເອລີຮູ ກ່າວຝ່າຍພຣະເຈົ້າ

1 ດັ່ງນັ້ນ ບຸລຸດທັງສາມກໍຢຸດຕອບ ໂຢບ ເພາະ ໂຢບ ຊອບທຳໃນສາຍຕາຂອງຕົນເອງ 2 ແລ້ວ
ເອລີຮູ ລູກຊາຍ ບາຣາເກນ ຄົນ ບູເຊ ຄອບຄົວລາມ ກໍຮ້າຍ ລາວຮ້າຍ ໂຢບ ເພາະເພິ່ນອ້າງ
ຕົວວ່າຊອບທຳ ບໍ່ແມ່ນ ພຣະເຈົ້າ 3 ລາວຮ້າຍສະຫາຍສາມຄົນຂອງ ໂຢບ ດ້ວຍ ເພາະພວກເຂົາ
ທັງຫລາຍຕອບບໍ່ໄດ້ ທັງໆທີ່ພວກເຂົາຫາວ່າ ໂຢບ ຜິດ 4 ຝ່າຍ ເອລີຮູ ຄອຍຖ້າຈົນ ໂຢບ ເວົ້າຈົບ
ເພາະພວກເຂົາມີອາຍຸສູງກວ່າຕົນ 5 ແລະ ເມື່ອ ເອລີຮູ ເຫັນວ່າບໍ່ມີຄຳຕອບ ໃນປາກຂອງບຸລຸດທັງ
ສາມນີ້ແລ້ວ ລາວຈຶ່ງຮ້າຍ

6 ແລະ ເອລີຮູ ລູກຊາຍ ບາຣາເກນ ຄົນ ບູເຊ ກ່າວວ່າ
"ຂ້າພະເຈົ້າຍັງໜຸ່ມ ແລະທ່ານທັງຫລາຍມີອາຍຸສູງແລ້ວ
ເພາະສະນັ້ນ ຂ້າພະເຈົ້າຢຳເກງທີ່ຈະກ່າວຄວາມຄິດເຫັນຂອງຂ້າພະເຈົ້າແກ່ທ່ານ
7 ຂ້າພະເຈົ້າວ່າ 'ຂໍໃຫ້ວັນເວລາເວົ້າສາ
ແລະໃຫ້ປີຫລາຍປີສອນສະຕິປັນຍາ'
8 ແຕ່ມີຈິດວິນຍານໃນມະນຸດ
ການດົນໃຈຈາກອົງຜູ້ມີລິດອຳນາດເຮັດໃຫ້ພວກເຂົາເຂົ້າໃຈໄດ້
9 ບໍ່ແມ່ນຄົນເຖົ້າເທົ່ານັ້ນທີ່ເປັນຄົນສະຫລາດ
ຫລືຄົນສູງອາຍຸເຂົ້າໃຈຄວາມຍຸດຕິທຳ
10 ເພາະສະນັ້ນ ຂ້າພະເຈົ້າຈຶ່ງວ່າ 'ຂໍຟັງຂ້າພະເຈົ້າ
ຂໍໃຫ້ຂ້າພະເຈົ້າກ່າວຄວາມຄິດເຫັນຂອງຂ້າພະເຈົ້າດ້ວຍ'
11 ເບິ່ງແມ ຂ້າພະເຈົ້າໄດ້ຄອຍຖ້າຟັງຄຳຂອງທ່ານທັງຫລາຍ
ຂ້າພະເຈົ້າຫງ່ຽງຫູຟັງເຫດຜົນຂອງທ່ານຂະນະທີ່ທ່ານຄົ້ນຫາວ່າຈະເວົ້າອັນໃດ
12 ເອີ ຂ້າພະເຈົ້າສົນໃຈຟັງທ່ານ ແລະເບິ່ງແມ ບໍ່ມີຜູ້ໃດໃຫ້ເຫດຜົນອັນຄວນແກ່ ໂຢບ
ໃນພວກທ່ານບໍ່ມີຜູ້ໃດທີ່ຕອບຄຳຂອງ ໂຢບ ໄດ້
13 ເພື່ອພວກທ່ານຈະບໍ່ເວົ້າວ່າ 'ເຮົາໄດ້ພົບສະຕິປັນຍາແລ້ວ
ພຣະເຈົ້າ ໄດ້ເອົາຊະນະລາວແລ້ວ ບໍ່ແມ່ນມະນຸດ'
14 ລາວບໍ່ໄດ້ປາກຖ້ອຍຄຳຂອງລາວໃສ່ຂ້າພະເຈົ້າ
ແລະຂ້າພະເຈົ້າຈະບໍ່ຕອບຖ້ອຍຄຳຂອງລາວດ້ວຍຄຳເວົ້າຂອງທ່ານ
15 ພວກເຂົາທັງຫລາຍກໍປະຫລາດໃຈ ແລະບໍ່ຕອບອີກ
ພວກເຂົາບໍ່ມີຖ້ອຍຄຳຈະເວົ້າຈັກຄຳ

16 ແລະຂ້າພະເຈົ້າຈະຄອຍຖ້າບໍ (ເພາະພວກເຂົາທັງຫລາຍບໍ່ເວົ້າ
ເພາະພວກເຂົາຢືນຢູ່ບ່ອນນັ້ນ ບໍ່ຕອບອີກ)
17 ຂ້າພະເຈົ້າກ່າວວ່າ 'ຂ້າພະເຈົ້າຈະໃຫ້ຄຳຕອບຂອງຂ້າພະເຈົ້າ
ຂ້າພະເຈົ້າຈະສະແດງຄວາມຄິດເຫັນຂອງຂ້າພະເຈົ້າດ້ວຍ
18 ເພາະຂ້າພະເຈົ້າມີຖ້ອຍຄຳເຕັມຕົວ
ຈິດໃຈພາຍໃນຂ້າພະເຈົ້າບັງຄັບຂ້າພະເຈົ້າຢູ່'
19 ເບິ່ງແມ ຈິດໃຈຂອງຂ້າພະເຈົ້າເໝືອນເຫລົ້າອະງຸ່ນຊຶ່ງບໍ່ມີທີ່ລະບາຍອອກ
ເໝືອນຖົງໜັງເຫລົ້າອະງຸ່ນໃໝ່ຈະລະເບີດຢູ່ແລ້ວ
20 ຂ້າພະເຈົ້າຕ້ອງເວົ້າຈຶ່ງຈະໄດ້ຄວາມຊ່ວຍເຫລືອ
ຂ້າພະເຈົ້າຕ້ອງເປີດຮີມປາກຂຶ້ນຕອບ
21 ຂ້າພະເຈົ້າຈະບໍ່ສະແດງອະຄະຕິຕໍ່ບຸກຄົນໃດໆ
ຫລືໃຊ້ການຍົກຍໍຕົວຕໍ່ຜູ້ໃດ
22 ເພາະຂ້າພະເຈົ້າຍົກຍໍຕົວບໍ່ໄດ້ ຖ້າເຮັດຢ່າງນັ້ນ
ຜູ້ໄດ້ສ້າງຂ້າພະເຈົ້າຈະກຳຈັດຂ້າພະເຈົ້າເສຍໃນບໍ່ຊ້າ"

# ບົດທີ 33

## ເອລີຮູໃຫ້ເຫດຜົນກັບໂຢບ

1 "ໂຢບເອີຍ ຢ່າງໃດກໍຕາມ
ຂໍຟັງຄຳຂອງຂ້າພະເຈົ້າ ແລະຟັງຖ້ອຍຄຳທັງໝົດຂອງຂ້າພະເຈົ້າ
2 ເບິ່ງແມ ບັດນີ້ຂ້າພະເຈົ້າໄດ້ອ້າປາກ
ລີ້ນພາຍໃນປາກຂອງຂ້າພະເຈົ້າກໍເວົ້າ
3 ຖ້ອຍຄຳຂອງຂ້າພະເຈົ້າສະແດງຄວາມທ່ຽງທຳຂອງຈິດໃຈ
ແລະຮີມປາກຂອງຂ້າພະເຈົ້າຈະກ່າວຄວາມຮູ້ຢ່າງຈິງໃຈ
4 ພຣະວິນຍານຂອງພຣະເຈົ້າໄດ້ສ້າງຂ້າພະເຈົ້າ
ແລະລົມປານຂອງອົງຜູ້ມີລິດອຳນາດໄດ້ໃຫ້ຊີວິດແກ່ຂ້າພະເຈົ້າ
5 ຖ້າທ່ານຕອບຂ້າພະເຈົ້າໄດ້ ກໍຕອບ
ຈົ່ງລຳດັບຖ້ອຍຄຳຂອງທ່ານຕໍ່ໜ້າຂ້າພະເຈົ້າ ເຊີນສາ
6 ເບິ່ງແມ ຂ້າພະເຈົ້າຢູ່ເໝືອນທ່ານຢູ່ຊື່ພຣະພັກພຣະເຈົ້າ
ພຣະອົງໄດ້ປັ້ນຂ້າພະເຈົ້າຂຶ້ນມາຈາກດິນຄືກັນ
7 ຢ່າໃຫ້ຄວາມຢ້ານກົວຂ້າພະເຈົ້າເຮັດໃຫ້ທ່ານປະຫລາດໃຈ
ຂ້າພະເຈົ້າຈະບໍ່ຊັກຊວນທ່ານໜັກເກີນໄປ
8 ຈິງແທ້ ທ່ານເວົ້າໃຫ້ຂ້າພະເຈົ້າຟັງ
ແລະຂ້າພະເຈົ້າໄດ້ຍິນສຽງຖ້ອຍຄຳຂອງທ່ານວ່າ

9 ‘ຂ້າພະເຈົ້າບໍລິສຸດ ປາດສະຈາກການລະເມີດ
ຂ້າພະເຈົ້າບໍລິສຸດ ບໍ່ມີຄວາມຊົ່ວຊ້າໃນຂ້າພະເຈົ້າເລີຍ
10 ເບິ່ງແມ ພຣະອົງໄດ້ຫາເລື່ອງກັບຂ້າພະເຈົ້າ
ພຣະອົງໄດ້ນັບວ່າຂ້າພະເຈົ້າເປັນສັດຕູກັບພຣະອົງ
11 ພຣະອົງໄດ້ເອົາໂສ້ມັດຕີນຂອງຂ້າພະເຈົ້າໄວ້
ແລະໄດ້ເຝົ້າເບິ່ງທາງຂອງຂ້າພະເຈົ້າທັງໝົດ’
12 ໃນເລື່ອງນີ້ ທ່ານບໍ່ຍຸດຕິທຳເລີຍ ຂ້າພະເຈົ້າຈະຕອບທ່ານ
ພຣະເຈົ້າໃຫຍ່ກວ່າມະນຸດ
13 ເປັນຫຍັງທ່ານຈຶ່ງໂຕ້ແຍ້ງກັບພຣະອົງ
ເພາະພຣະອົງບໍ່ໄດ້ລາຍງານເລື່ອງພຣະລາຊະກິດໃດໆຂອງພຣະອົງເລີຍ
14 ເພາະພຣະເຈົ້າກ່າວເທື່ອໜຶ່ງ
ສອງເທື່ອ ແຕ່ມະນຸດບໍ່ຮູ້ເຫັນໄດ້
15 ໃນຄວາມຝັນ ໃນນິມິດກາງຄືນເມື່ອຄົນຫລັບສະນິດ
ເມື່ອລາວນອນຢູ່ເທິງບ່ອນນອນຂອງລາວ
16 ແລ້ວພຣະອົງໄດ້ເປີດຫູຂອງມະນຸດ
ແລະໄດ້ປະທັບຕາຄຳສັ່ງສອນຂອງພວກເຂົາໄວ້
17 ເພື່ອວ່າພຣະອົງຈະໄດ້ຫັນໃຫ້ມະນຸດກັບຈາກເປົ້າໝາຍຂອງຕົນ
ແລະຕັດຄວາມຈອງຫອງອອກເສຍຈາກມະນຸດ
18 ພຣະອົງໄດ້ປົກປ້ອງຈິດວິນຍານຂອງພວກເຂົາໄວ້ຈາກຂຸມຝັງສົບຄົນຕາຍ
ແລະຍຶດຊີວິດຂອງພວກເຂົາໄວ້ຈາກການຖືກທຳລາຍດ້ວຍດາບ
19 ມະນຸດຍັງຖືກຕີສອນດ້ວຍຄວາມເຈັບປວດເທິງຕຽງນອນຂອງພວກເຂົາດ້ວຍ
ແລະດ້ວຍຄວາມເຈັບປວດຢ່າງສາຫັດໃນກະດູກຕ່າງໆຂອງພວກເຂົາ
20 ຊີວິດຂອງພວກເຂົາຈຶ່ງເບື່ອອາຫານ
ແລະຈິດໃຈຈຶ່ງໄດ້ເບື່ອອາຫານທີ່ຕົນມັກແຕ່ກີ້
21 ເນື້ອໜັງຂອງພວກເຂົາຊຸດໂຊມໄປຫລາຍຈົນເບິ່ງບໍ່ເຫັນ
ກະດູກ ຊຶ່ງແນມບໍ່ເຫັນນັ້ນກໍພົ້ນອອກມາ
22 ແລະຈິດວິນຍານຂອງພວກເຂົາເຂົ້າໄປໃກ້ຂຸມຝັງສົບຄົນຕາຍ
ແລະຊີວິດຂອງພວກເຂົາໃກ້ຜູ້ທີ່ນຳຄວາມຕາຍມາ
23 ຖ້າມີຜູ້ສົ່ງຂ່າວຜູ້ໜຶ່ງມາເພື່ອເປັນຜູ້ອະທິບາຍ
ໜຶ່ງພັນຄົນເພື່ອຈະສະແດງຄວາມສັດຊື່ໃຫ້ມະນຸດເຮັດຕາມ
24 ແລະຜູ້ສົ່ງຂ່າວນັ້ນກະລຸນາພວກເຂົາ ທູນວ່າ
‘ຂໍໄດ້ປ່ອຍພວກເຂົາໃຫ້ພົ້ນຈາກບ່ອນທີ່ຈະໄປຍັງຂຸມຝັງສົບຄົນຕາຍ
ຂ້ານ້ອຍພົບຄ່າໄຖ່ແລ້ວ

25 ເນື້ອໜັງຂອງພວກເຂົາຈະອ່ອນກວ່າເນື້ອໜັງເດັກ
ຂໍໃຫ້ພວກເຂົາກັບໄປສູ່ກຳລັງຄືຕອນຍັງໜຸ່ມ'
26 ພວກເຂົາຈຶ່ງຈະອະທິຖານຕໍ່ພຣະເຈົ້າ ແລະພຣະອົງຈະໄດ້ພໍພຣະໄທ
ພວກເຂົາຈະເຫັນພຣະພັກພຣະອົງດ້ວຍຄວາມຊື່ນບານ
ແລ້ວພຣະອົງຈະໄດ້ໃຫ້ມະນຸດກັບສູ່ສະພາບຄວາມຊອບທຳ
27 ພຣະອົງໄດ້ທອດພຣະເນດມະນຸດ ແລະຖ້າຜູ້ໃດກ່າວວ່າ 'ຂ້ອຍບາບແລ້ວ
ແລະເຫັນຜິດເປັນຖືກ ແລະບໍ່ໄດ້ເປັນປະໂຫຍດຫຍັງແກ່ຂ້ອຍ'
28 ພຣະອົງຈະໄດ້ໄຖ່ຈິດວິນຍານຂອງຜູ້ນັ້ນໃຫ້ພົ້ນຈາກການລົງໄປສູ່ຂຸມຝັງສົບຄົນຕາຍ
ແລະຊີວິດຂອງລາວຈະເຫັນຄວາມສະຫວ່າງ
29 ເບິ່ງແມພຣະເຈົ້າໄດ້ກະທຳສິ່ງເຫລົ່ານີ້
ທັງໝົດກັບມະນຸດເລື້ອຍໆຫລາຍເທື່ອ
30 ເພື່ອຈະນຳຈິດວິນຍານຂອງມະນຸດມາຈາກຂຸມຝັງສົບຄົນຕາຍ
ເພື່ອໃຫ້ລາວແຈ່ມແຈ້ງຂຶ້ນດ້ວຍຄວາມສະຫວ່າງຂອງຜູ້ໄດ້ມີຊີວິດ
31 ໂອໂຢບເອີຍ ຂໍຕັ້ງໃຈຟັງຂ້າພະເຈົ້າ
ຂໍງຽບ ແລະຂ້າພະເຈົ້າຈະເວົ້າ
32 ຖ້າທ່ານມີຄຳເວົ້າກໍຕອບຂ້າພະເຈົ້າມາໂລດ
ເພາະຂ້າພະເຈົ້າປາດຖະໜາແກ້ຄະດີໃຫ້ທ່ານ
33 ຖ້າບໍ່ດັ່ງນັ້ນ ກໍຂໍຟັງຂ້າພະເຈົ້າ ຂໍໃຫ້ງຽບ
ແລະຂ້າພະເຈົ້າຈະສັ່ງສອນທ່ານໃຫ້ຮູ້ຈັກປັນຍາ"

# ບົດທີ 34

## ເອລີຮູກ່າວເຖິງເຫດຜົນຕ່າງໆຂອງໂຢບ

1 ເອລີຮູເວົ້າຕໍ່ໄປວ່າ
2 "ໂອ ເຈົ້າຜູ້ມີປັນຍາ ຂໍຟັງຖ້ອຍຄຳຂອງຂ້າພະເຈົ້າ
ເຈົ້າຜູ້ມີຄວາມຮູ້ ຂໍຫງ່ຽງຫູຟັງຂ້າພະເຈົ້າ
3 ເພາະຫູກໍລອງຊີມຖ້ອຍຄຳ
ເໝືອນກັບເພດານປາກຊີມອາຫານ
4 ຂໍໃຫ້ເຮົາເລືອກສິ່ງທີ່ຖືກ
ຂໍໃຫ້ເຮົາຮຽນຮູ້ໃນພວກເຮົາເອງວ່າອັນໃດດີ
5 ເພາະໂຢບກ່າວວ່າ 'ຂ້າພະເຈົ້າເປັນຄົນຊອບທຳ
ແລະພຣະເຈົ້າໄດ້ເອົາຄວາມຍຸດຕິທຳທີ່ຄວນເປັນຂອງຂ້າພະເຈົ້າໄປເສຍ'
6 ຂ້າພະເຈົ້າຖືກນັບເປັນຄົນຂີ້ຕົວະ ເຖິງແມ່ນຂ້າພະເຈົ້າຊອບທຳ
ບາດຂອງຂ້າພະເຈົ້າຮັກສາບໍ່ເຊົາເຖິງວ່າຂ້າພະເຈົ້າບໍ່ມີການລະເມີດເລີຍ

7 ໃຜໜໍທີ່ຈະເໝືອນໂຢບ
ຜູ້ດື່ມຄວາມໝິ່ນປະໝາດເໝືອນດື່ມນໍ້າ
8 ຜູ້ເຂົ້າສັງຄົມກັບຄົນເຮັດຄວາມຊົ່ວຊ້າ
ແລະຍ່າງໄປກັບຄົນຊົ່ວ
9 ເພາະເຈົ້າໄດ້ກ່າວວ່າ 'ບໍ່ເປັນປະໂຫຍດຫຍັງແກ່ມະນຸດເຮົາ
ທີ່ລາວຈະປິຕິຍິນດີໃນ **ພຣະເຈົ້າ**'
10 ເພາະສະນັ້ນ ເຈົ້າຜູ້ມີຄວາມເຂົ້າໃຈ ຂໍຟັງຂ້າພະເຈົ້າແດ່
ຄວາມຊົ່ວຢູ່ຫ່າງໄກຈາກ **ພຣະເຈົ້າ**
ແລະຄວາມຊອບທຳກໍຢູ່ຫ່າງໄກຈາກອົງຜູ້ມີລິດອຳນາດ
11 ເພາະ **ພຣະເຈົ້າ** ຈະຕອບແທນຕາມການເຮັດຂອງມະນຸດ
ແລະພຣະອົງໄດ້ໃຫ້ເກີດແກ່ພວກເຂົາຕາມການກະທຳຂອງພວກເຂົາ
12 ຈິງແທ້ພຣະເຈົ້າ ຈະບໍ່ກະທຳຊົ່ວ
ແລະອົງຜູ້ມີລິດອຳນາດຈະບໍ່ໄດ້ປ່ຽນແປງຄວາມຍຸດຕິທຳ
13 ໃຜແຕ່ງຕັ້ງໃຫ້ພຣະອົງປົກຄອງໂລກ
ຫລືໃຜມອບທັງໂລກໄວ້ກັບພຣະອົງ
14 ຖ້າພຣະອົງໄດ້ເອົາພຣະໄທໃສ່ກັບມະນຸດ ແລະໄດ້ຮວບຮວມວິນຍານ
ກັບລົມປານຂອງພວກເຂົາກັບມາສູ່ພຣະອົງ
15 ເນື້ອໜັງທັງໝົດກໍຈະພິນາດໄປນຳກັນ
ແລະມະນຸດກໍຈະກັບໄປເປັນຂີ້ຝຸ່ນດິນ
16 ຖ້າທ່ານມີຄວາມເຂົ້າໃຈ ຂໍຟັງຂໍ້ນີ້
ຂໍຟັງສຽງຖ້ອຍຄຳຂອງຂ້າພະເຈົ້າ
17 ຜູ້ທີ່ກຽດຊັງຄວາມຍຸດຕິທຳຄວນຈະປົກຄອງບໍ
ທ່ານຈະປະນາມຜູ້ທີ່ຊອບທຳທີ່ສຸດບໍ
18 ເໝາະສົມຫລືບໍ່ທີ່ຈະເວົ້າແກ່ກະສັດວ່າ 'ເຈົ້າຜູ້ຊົ່ວຮ້າຍ'
ແລະແກ່ເຈົ້ານາຍວ່າ 'ເຈົ້າທັງຫລາຍຜູ້ອະທຳ'
19 ຫລາຍກວ່ານັ້ນອີກ ບໍ່ເໝາະສົມທີ່ຈະສະແດງອະຄະຕິແກ່ເຈົ້ານາຍ
ຫລືບໍ່ໄດ້ເຫັນແກ່ຄົນຮັ່ງມີຫລາຍກວ່າຄົນຍາກຈົນ
ເພາະຄົນທັງໝົດນີ້ເປັນສີພຣະຫັດຂອງພຣະອົງ
20 ບັດດຽວໜຶ່ງ ພວກເຂົາທັງຫລາຍກໍຕາຍ
ເວລາທ່ຽງຄືນປະຊາຊົນຕົວສັ່ນ ແລະຕາຍໄປ
ແລະຜູ້ມີລິດທານຸພາບກໍຖືກເອົາໄປເສຍບໍ່ແມ່ນດ້ວຍມືມະນຸດ
21 ເພາະພຣະເນດຂອງພຣະອົງເບິ່ງທາງທັງຫລາຍຂອງມະນຸດ
ພຣະອົງໄດ້ເຫັນທາງເດີນຂອງພວກເຂົາໝົດ

22 ບໍ່ມີບ່ອນມືດຄຶ້ມ ຫລືເງົາມັດຈຸລາດ
ຊຶ່ງຄົນເຮັດຄວາມຊົ່ວຊ້າຈະລີ້ຕົວໄດ້
23 ເພາະພຣະອົງຈະບໍ່ໄດ້ກຳນົດໃຫ້ມະນຸດເຮັດເກີນສິ່ງທີ່ສົມຄວນ
ໃຫ້ເຂົ້າເຝົ້າພຣະເຈົ້າຮັບການພິພາກສາ
24 ພຣະອົງໄດ້ຕີຜູ້ມີລິດທານຸພາບເປັນຕ່ອນໆໂດຍບໍ່ຕ້ອງນັບ
ແລະໄດ້ຕັ້ງຄົນອື່ນໄວ້ແທນ
25 ເພາະສະນັ້ນ ພຣະອົງໄດ້ຮູ້ກິດຈະການຂອງພວກເຂົາ
ແລະໄດ້ລົ້ມພວກເຂົາເສຍໃນກາງຄືນ ພວກເຂົາກໍແຫລກມຸ່ນໄປ
26 ພຣະອົງໄດ້ຕີພວກເຂົາ
ເໝືອນຢ່າງຄົນຊົ່ວຕໍ່ໜ້າຕໍ່ຕາຄົນອື່ນ
27 ເພາະວ່າພວກເຂົາທັງຫລາຍຖອຍຫລັງກັບຈາກການຕິດຕາມພຣະອົງ
ແລະບໍ່ນັບຖືເສັ້ນທາງຂອງພຣະອົງແຕ່ຢ່າງໃດເລີຍ
28 ເຫດນີ້ ພວກເຂົາຈຶ່ງເຮັດໃຫ້ສຽງຮ້ອງຂອງຄົນຍາກຈົນມາເຖິງພຣະອົງ
ແລະພຣະອົງໄດ້ຟັງສຽງຮ້ອງຂອງຜູ້ຮັບຄວາມທຸກໃຈ
29 ເມື່ອພຣະອົງໄດ້ປະທານຄວາມສະຫງົບໃຫ້ ໃຜຈະສ້າງຄວາມຫຍຸ້ງຍາກໄດ້
ເມື່ອພຣະອົງໄດ້ເຊື່ອງພຣະພັກຂອງພຣະອົງ ໃຜຈະເຫັນພຣະອົງໄດ້
ບໍ່ວ່າຈະເຮັດແກ່ປະຊາຊາດ ຫລືແກ່ບຸກຄົນກໍຄືກັນ
30 ເພື່ອວ່າຄົນໜ້າຊື່ໃຈຄົດຈະບໍ່ໄດ້ປົກຄອງ
ແລະພວກເຂົາຈະບໍ່ວາງກັບດັກປະຊາຊົນ
31 ເພາະເປັນສິ່ງເໝາະສົມທີ່ຈະຮ້ອງທູນພຣະເຈົ້າວ່າ
'ຂ້ານ້ອຍໄດ້ຮັບການຕີສອນແລ້ວ ຂ້ານ້ອຍຈະບໍ່ເຮັດຜິດຕໍ່ໄປອີກ
32 ຂໍໄດ້ໂຜດສອນຂ້ານ້ອຍເຖິງສິ່ງທີ່ຂ້ານ້ອຍເບິ່ງບໍ່ເຫັນ
ຖ້າຂ້ານ້ອຍເຮັດຄວາມຊົ່ວຊ້າ ຂ້ານ້ອຍຈະບໍ່ເຮັດອີກ'
33 ການຕອບສະໜອງຂອງພຣະອົງຈະຕ້ອງເປັນເໝືອນທີ່ທ່ານຕ້ອງການບໍ
ທ່ານຈຶ່ງບໍ່ຮັບ ທ່ານເອງຕ້ອງເລືອກ ແລະບໍ່ແມ່ນຂ້າພະເຈົ້າ
ເຫດສະນັ້ນ ທ່ານມີຄວາມຄິດເຫັນຢ່າງໃດ ກໍເວົ້າໄປໂລດ
34 ຈົ່ງໃຫ້ຄົນທີ່ເຂົ້າໃຈເວົ້າກັບຂ້າພະເຈົ້າ
ແລະໃຫ້ຄົນສະຫລາດຟັງຂ້າພະເຈົ້າ
35 ໂຢບເວົ້າຢ່າງບໍ່ມີຄວາມຮູ້
ຖ້ອຍຄຳຂອງລາວປາດສະຈາກສະຕິປັນຍາ
36 ຂ້າພະເຈົ້າປາດຖະໜາໃຫ້ໂຢບຖືກທົດລອງຕໍ່ໄປເຖິງທີ່ສຸດ
ເພາະວ່າລາວຕອບເໝືອນຢ່າງຄົນຊົ່ວ
37 ເພາະລາວເພີ່ມການກະບົດເຂົ້າກັບບາບຂອງລາວ

ລາວຕົບມືເຍີ້ຍຢູ່ທ່າມກາງເຮົາ
ແລະທະວີຖ້ອຍຄຳຂອງລາວກ່າວຮ້າຍ ພຣະເຈົ້າ”

# ບົດທີ 35

## ເອລີຮູກ່າວເຖິງຄວາມຊອບທຳຂອງພຣະເຈົ້າ

1 ເອລີຮູ ເວົ້າຕໍ່ໄປວ່າ
2 “ທ່ານຄິດວ່າ ນີ້ຍຸດຕິທຳບໍ ທ່ານເວົ້າບໍວ່າ
‘ຄວາມຊອບທຳຂອງຂ້າພະເຈົ້າຫລາຍກວ່າຂອງ ພຣະເຈົ້າ’
3 ທີ່ທ່ານຖາມວ່າ ‘ຂ້າພະເຈົ້າຈະໄດ້ປະໂຫຍດຫຍັງ’
ແລະ ‘ຂ້າພະເຈົ້າຈະໄດ້ປະໂຫຍດຫຍັງ
ຖ້າຂ້າພະເຈົ້າໄດ້ຮັບການຊຳລະຈາກບາບຂອງຂ້າພະເຈົ້າ’
4 ຂ້າພະເຈົ້າຈະຕອບທ່ານ
ກັບມິດສະຫາຍຂອງທ່ານດ້ວຍ
5 ຈົ່ງເບິ່ງທ້ອງຟ້າ
ເບິ່ງເມກຊຶ່ງຢູ່ສູງກວ່າທ່ານ
6 ຖ້າທ່ານເຮັດບາບ ທ່ານຈະໄດ້ຫຍັງທີ່ກະທົບກະເທືອນພຣະອົງ
ຖ້າການລະເມີດຂອງທ່ານທະວີຂຶ້ນ ທ່ານເຮັດຫຍັງໃຫ້ແກ່ພຣະອົງ
7 ຖ້າທ່ານເປັນຄົນຊອບທຳ ທ່ານຖວາຍຫຍັງແດ່ພຣະອົງ
ຫລືພຣະອົງໄດ້ຮັບຫຍັງຈາກມືຂອງທ່ານ
8 ຄວາມຊົ່ວຂອງທ່ານກໍເປັນອັນຕະລາຍແກ່ຄົນຢ່າງທ່ານ
ແລະຄວາມຊອບທຳຂອງທ່ານກໍເປັນປະໂຫຍດແກ່ບຸດມະນຸດ
9 ເຫດວ່າການຖືກບີບບັງຄັບເປັນຈຳນວນຫລາຍ
ກໍເຮັດໃຫ້ຜູ້ທີ່ຖືກບີບບັງຄັບນັ້ນຮ້ອງທຸກ
ລາວຮ້ອງຂໍຄວາມຊ່ວຍເຫລືອເນື່ອງດ້ວຍແຂນຂອງຜູ້ມີອຳນາດ
10 ແຕ່ບໍ່ມີຈັກຄົນເວົ້າວ່າ ‘ພຣະເຈົ້າຜູ້ໄດ້ສ້າງຂ້າພະເຈົ້າ
ຜູ້ປະທານເພງໃນເວລາກາງຄືນ ຢູ່ທີ່ໃດ
11 ຜູ້ໄດ້ສອນເຮົາຫລາຍກວ່າສອນສັດຂອງແຜ່ນດິນໂລກ
ແລະໄດ້ກະທຳໃຫ້ເຮົາສະຫລາດກວ່ານົກໃນຟ້າອາກາດ’
12 ລາວຮ້ອງທຸກໃນບ່ອນນັ້ນ ແຕ່ບໍ່ມີຜູ້ໃດຕອບລາວ
ເຫດຄວາມຈອງຫອງຂອງຄົນຊົ່ວ
13 ຈິງແທ້ພຣະເຈົ້າບໍ່ໄດ້ຟັງສິ່ງບໍ່ມີປະໂຫຍດ
ແລະອົງຜູ້ມີລິດອຳນາດກໍບໍ່ໄດ້ນັບຖືສຽງນັ້ນ
14 ເຖິງແມ່ນທ່ານວ່າ ທ່ານຈະບໍ່ເຫັນພຣະອົງ

ແຕ່ຄະດີນັ້ນກໍຢູ່ຕໍ່ພຣະພັກພຣະອົງ
ສະນັ້ນ ທ່ານຈົ່ງວາງໃຈໃນພຣະອົງ
15 ບັດນີ້ ເພາະບໍ່ເປັນເຊັ່ນນັ້ນ ພຣະພິໂລດຂອງພຣະອົງໄດ້ລົງໂທດ
ແຕ່ພຣະອົງບໍ່ໄດ້ສົນພຣະໄທການລະເມີດຫລວງຫລາຍ
16 ເພາະສະນັ້ນໂຢບຈຶ່ງອ້າປາກເວົ້າຄຳເປົ່າປະໂຫຍດ
ແລະທະວີຄຳເວົ້າໂດຍປາດສະຈາກຄວາມຮູ້"

# ບົດທີ 36

## ພຣະເຈົ້າຊອບທຳ

1 ແລະ ເອລີຮູ ເວົ້າຕໍ່ໄປດ້ວຍວ່າ
2 "ຂໍທົນຢູ່ກັບຂ້າພະເຈົ້າແດ່ ແລະຂ້າພະເຈົ້າຈະສະແດງແກ່ທ່ານ
ເພາະຂ້າພະເຈົ້າມີບາງສິ່ງທີ່ຈະເວົ້າແທນ ພຣະເຈົ້າອີກ
3 ຂ້າພະເຈົ້າຈະເອົາຄວາມຮູ້ມາຈາກບ່ອນໄກ
ແລະຖວາຍຄວາມຊອບທຳແດ່ຜູ້ໄດ້ສ້າງຂ້າພະເຈົ້າ
4 ເພາະທີ່ຈິງຖ້ອຍຄຳຂອງຂ້າພະເຈົ້າບໍ່ແມ່ນບໍ່ຈິງ
ພຣະອົງຜູ້ມີຄວາມຮູ້ຄົບຖ້ວນສະຖິດກັບທ່ານ
5 ເບິ່ງແມ ພຣະເຈົ້າມີລິດທານຸພາບ ແລະບໍ່ໄດ້ໝິ່ນປະໝາດຜູ້ໃດເລີຍ
ພຣະອົງມີລິດທານຸພາບໃນເລື່ອງກຳລັງແລະສະຕິປັນຍາ
6 ພຣະອົງບໍ່ໄດ້ລ້ຽງຊີວິດຄົນຊົ່ວ
ແຕ່ໄດ້ປະທານຄວາມຍຸດຕິທຳແກ່ຄົນຍາກຈົນ
7 ພຣະອົງບໍ່ໄດ້ຫັນພຣະເນດຂອງພຣະອົງຈາກຄົນຊອບທຳ
ແຕ່ກັບບັນດາກະສັດເທິງພະທີ່ນັ່ງ
ພຣະອົງໄດ້ຕັ້ງພວກເຂົາໄວ້ເປັນນິດ ແລະພວກເຂົາກໍຢູ່ໃນບ່ອນສູງ
8 ແລະຖ້າພວກເຂົາຖືກຂັງດ້ວຍພັນທະນາການ
ແລະຕິດຢູ່ໃນບ້ວງແຮ້ວຂອງຄວາມທຸກໃຈ
9 ພຣະອົງກໍໄດ້ສະແດງກິດຈະກຳຂອງພວກເຂົາທັງຫລາຍແກ່ພວກເຂົາ
ແລະການລະເມີດຂອງພວກເຂົາວ່າພວກເຂົາໄດ້ເຮັດຫລາຍເກີນໄປ
10 ພຣະອົງໄດ້ເປີດຫູຂອງພວກເຂົາໃຫ້ຟັງຄຳເຕືອນສອນ
ແລະໄດ້ບັນຊາໃຫ້ພວກເຂົາກັບຈາກຄວາມຊົ່ວຊ້າຂອງຕົນ
11 ຖ້າພວກເຂົາທັງຫລາຍເຊື່ອຟັງ
ແລະປົວລະບັດພຣະອົງ
ພວກເຂົາຈະຢູ່ຄົບອາຍຸດ້ວຍຄວາມຈະເລີນຮຸ່ງເຮືອງ
ແລະຢູ່ຄົບປີດ້ວຍຄວາມສຸກໃຈ

12 ແຕ່ຖ້າພວກເຂົາບໍ່ເຊື່ອຟັງ ພວກເຂົາກໍຈະຈິບຫາຍດ້ວຍດາບ
ແລະຕາຍໂດຍປາດສະຈາກຄວາມຮູ້
13 ຄົນໜ້າຊື່ໃຈຄົດກໍສະສົມພຣະພິໂລດ
ເມື່ອພຣະອົງໄດ້ມັດລາວ ລາວບໍ່ຮ້ອງໃຫ້ຊ່ວຍ
14 ລາວຕາຍເມື່ອຍັງໜຸ່ມຢູ່
ແລະຊີວິດຂອງລາວຢູ່ທ່າມກາງພວກກະເທີຍ
15 ພຣະອົງໄດ້ຊ່ວຍຄົນຍາກຈົນໃຫ້ພົ້ນດ້ວຍຄວາມທຸກໃຈຂອງພວກເຂົາ
ແລະໄດ້ໃຫ້ຄວາມລຳບາກເປີດຫູຂອງພວກເຂົາ
16 ພຣະອົງຈະຊ່ວຍທ່ານໃຫ້ອອກມາຈາກຄວາມຄັບໃຈ
ມາຍັງບ່ອນກວ້າງທີ່ບໍ່ມີການບີບບັງຄັບ
ແລະສິ່ງທີ່ວາງໄວ້ໃນໂຕະອາຫານຂອງທ່ານກໍມີແຕ່ສິ່ງບໍລິບູນ
17 ແຕ່ທ່ານກໍສົມກັບການພິພາກສາຄົນຊົ່ວ ການພິພາກສາ
ແລະຄວາມຍຸດຕິທຳມາທັນຈັບທ່ານ
18 ເຫດວ່າພຣະພິໂລດ ຈົ່ງລະວັງ
ຢ້ານວ່າພຣະອົງຈະເອົາທ່ານໄປດ້ວຍການລົງໂທດ
ແລ້ວແມ່ແຕ່ການໄຖ່ອັນຍິ່ງໃຫຍ່ກໍບໍ່ສາມາດຊ່ວຍທ່ານໃຫ້ພົ້ນໄດ້
19 ພຣະອົງຈະສົນພຣະໄທໃນຊັບສົມບັດຂອງທ່ານ
ຫລືຄຳ ຫລືເຫື່ອແຮງທັງໝົດບໍ
20 ຢ່າອາໄລເຖິງກາງຄືນ
ເມື່ອຊົນຊາດທັງຫລາຍຖືກຕັດຂາດໃນບ່ອນຂອງພວກເຂົາ
21 ລະວັງໃຫ້ດີ ຢ່າຫັນໄປຫາຄວາມຊົ່ວຊ້າ
ເພາະທ່ານເລືອກສິ່ງນີ້ຫລາຍກວ່າເລືອກຄວາມທຸກໃຈ
22 ເບິ່ງແມພຣະເຈົ້າໄດ້ສະແດງຄວາມຍິ່ງໃຫຍ່ດ້ວຍລິດທານຸພາບຂອງພຣະອົງ
ຜູ້ໃດເປັນຜູ້ສັ່ງສອນເໝືອນຢ່າງພຣະອົງບໍ
23 ຜູ້ໃດເປັນຜູ້ກຳນົດເສັ້ນທາງຂອງພຣະອົງ ຫລືຜູ້ໃດຈະເວົ້າໄດ້ວ່າ
'ພຣະອົງໄດ້ກະທຳຄວາມຊົ່ວຊ້າແລ້ວ'
24 ຈົ່ງລະນຶກເຖິງການຍົກຍ້ອງພຣະລາຊະກິດຂອງພຣະອົງ
ຊຶ່ງມະນຸດໄດ້ເຫັນນັ້ນ
25 ມະນຸດທັງປວງເຝົ້າເບິ່ງສິ່ງນັ້ນຢູ່ແລ້ວ
ມະນຸດເຫັນສິ່ງນັ້ນໄດ້ແຕ່ໄກ
26 ເບິ່ງແມພຣະເຈົ້ານັ້ນຍິ່ງໃຫຍ່ ແລະເຮົາກໍບໍ່ອາດຮູ້ເຫັນເຖິງພຣະອົງໄດ້
ອາຍຸຂອງພຣະອົງເປັນສິ່ງທີ່ຄົ້ນຫາກັນບໍ່ໄດ້
27 ເພາະພຣະອົງໄດ້ດຶງເມັດນ້ຳຂຶ້ນໄປ

ຊຶ່ງຕົກລົງເປັນຝົນຈາກອາຍນໍ້າຂອງພຣະອົງ
28 ຊຶ່ງເມກກໍຖອກລົງມາ
ແລະຍ້ອຍລົງໃສ່ມະນຸດຢ່າງອຸດົມສົມບູນ
29 ມີຄົນໃດເຂົ້າໃຈການແຜ່ຂອງເມກບໍ
ແລະຟ້າຮ້ອງໃນທໍາເນັນຂອງພຣະອົງບໍ
30 ເບິ່ງເຖີດ ພຣະອົງໄດ້ກະຈາຍຟ້າແລບອອກໄປຮອບພຣະອົງ
ແລະປົກກົ້ນຂອງທະເລ
31 ເພາະພຣະອົງໄດ້ພິພາກສາຊົນຊາດທັງຫລາຍດ້ວຍສິ່ງນີ້
ພຣະອົງປະທານອາຫານຢ່າງອຸດົມສົມບູນ
32 ພຣະອົງໄດ້ປົກຄຸມຟ້າແລບດ້ວຍເມກ
ແລະໄດ້ບັນຊາໃຫ້ເມກບັງຟ້າແລບນັ້ນ
33 ສຽງຄື້ນໆຂອງມັນປະກາດກ່ຽວກັບພຣະອົງ
ແລະຝູງສັດກໍປະກາດກ່ຽວກັບພາຍຸຊຶ່ງຈະມາເຖິງ"

# ບົດທີ 37

## ພຣະລາຊະກິດ ແລະສະຕິປັນຍາຂອງພຣະເຈົ້າ

1 "ເລື່ອງນີ້ເຮັດໃຫ້ຫົວໃຈຂອງຂ້າພະເຈົ້າສັ່ນສະທ້ານ ຂວັນໜີດີຝໍ່
2 ຈົ່ງຕັ້ງໃຈຟັງສຽງດັງຈາກພຣະໂອດຂອງພຣະອົງ
ແລະສຽງຟ້າຮ້ອງທີ່ອອກມາຈາກພຣະໂອດຂອງພຣະອົງ
3 ພຣະອົງໄດ້ປ່ອຍໃຫ້ດັງທົ່ວໃຕ້ຟ້າທັງໝົດ
ແລະຟ້າແລບຂອງພຣະອົງໄປເຖິງສຸດປາຍແຜ່ນດິນໂລກ
4 ພຣະສຸລະສຽງຂອງພຣະອົງຮ້ອງຕາມໄປ
ພຣະອົງໄດ້ແຜດພຣະສຸລະສຽງອັນມີລິດທານຸພາບຂອງພຣະອົງ
ພຣະອົງບໍ່ໄດ້ຫ້າມຟ້າແລບ ເມື່ອໄດ້ຍິນພຣະສຸລະສຽງຂອງພຣະອົງ
5 **ພຣະເຈົ້າ** ໄດ້ສະແດງໃຫ້ຟ້າຮ້ອງຢ່າງປະຫລາດດ້ວຍພຣະສຸລະສຽງຂອງພຣະອົງ
ພຣະອົງໄດ້ກະທໍາກິດຈະການອັນໃຫຍ່ ຊຶ່ງເຮົາເຂົ້າໃຈບໍ່ໄດ້
6 ເພາະພຣະອົງກ່າວກັບຫິມະວ່າ 'ຕົກລົງເທິງແຜ່ນດິນ'
ແລະໃນທໍານອງດຽວກັນກໍກ່າວກັບຝົນ
ແລະກັບທ່າຝົນອັນໜັກແຫ່ງກໍາລັງຂອງພຣະອົງ
7 ພຣະອົງໄດ້ມັດມືຂອງມະນຸດທຸກຄົນ
ເພື່ອທຸກຄົນຈະຮູ້ຈັກພຣະລາຊະກິດຂອງພຣະອົງ
8 ແລ້ວສັດປ່າຈຶ່ງເຂົ້າໄປສູ່ຮັງຂອງມັນ
ແລະພັກຢູ່ໃນຖໍ້າຂອງມັນ

9 ລົມບ້າໝູອອກມາຈາກຫ້ອງທິດໃຕ້
ແລະຄວາມໜາວມາຈາກລົມເໜືອ
10 ພຣະເຈົ້າປະທານນໍ້າໝອກແຂງດ້ວຍລົມຫາຍໃຈຂອງພຣະອົງ
ແລະນໍ້າກວ້າງໃຫຍ່ກໍແຂງຕົວ
11 ເຊັ່ນດຽວກັນພຣະອົງໄດ້ບັນທຸກຄວາມຊຸ່ມຊື່ນໄວ້ທີ່ເມກທຶບ
ພຣະອົງກະຈາຍເມກແຫ່ງຟ້າແລບອອກໄປ
12 ມັນຫັນໄປ ຕາມການນຳຂອງພຣະອົງ
ເພື່ອໃຫ້ມັນເຮັດຕາມທີ່ພຣະອົງໄດ້ບັນຊາມັນໄວ້ເໜືອໜ້າໂລກນີ້
13 ບໍ່ວ່າຈະເພື່ອການຕີສອນ ຫລືເພື່ອແຜ່ນດິນຂອງພຣະອົງ
ຫລືເພື່ອຄວາມເມດຕາ ພຣະອົງໄດ້ກະທຳໃຫ້ສິ່ງເຫລົ່ານີ້ເກີດຂຶ້ນ
14 ໂອໂຢບເອີຍ ຂໍຟັງຂໍ້ນີ້
ຈົ່ງມິດງຽບພິຈາລະນາການເຮັດອັນມະຫັດສະຈັນຂອງພຣະເຈົ້າ
15 ເຈົ້າບໍ່ຮູ້ຫລືວ່າພຣະເຈົ້າໄດ້ສັ່ງມັນຢ່າງໃດ
ແລະເຮັດໃຫ້ຟ້າແລບແຫ່ງເມກຂອງພຣະອົງມີແສງ
16 ເຈົ້າຮູ້ເຖິງການຊົງຕົວຂອງເມກບໍ
ເປັນພຣະລາຊະກິດອັນປະຫລາດຂອງພຣະອົງຜູ້ສົມບູນໃນຄວາມຮູ້
17 ເຫດສັນໃດ ເສື້ອຜ້າຂອງທ່ານຮ້ອນເມື່ອແຜ່ນດິນໂລກອົບເອົ້າ
ແລະເພາະລົມທິດໃຕ້
18 ທ່ານແຜ່ຟ້າອອກໄປພ້ອມກັບພຣະອົງໄດ້ບໍ
ໃຫ້ແຂງເໝືອນກະຈົກເຫລື້ອມ
19 ຈົ່ງສອນເຮົາມາວ່າ ເຮົາຄວນຈະທູນພຣະອົງຢ່າງໃດ
ເພາະຄວາມມືດ ເຮົາຈຶ່ງບໍ່ຮູ້ຈັດແຈງຖ້ອຍຄຳຂອງເຮົາ
20 ຈະທູນພຣະອົງໄດ້ບໍວ່າ ຂ້າພະເຈົ້າຢາກຈະທູນ
ຖ້າຜູ້ໃດທູນ ລາວຈະຕ້ອງຖືກກືນໄປໝົດເປັນແນ່
21 ບັດນີ້ ມະນຸດເຝົ້າເບິ່ງຟ້າແລບອັນສຸກໃສຂອງເມກບໍ່ໄດ້
ເມື່ອລົມຜ່ານໄປກວາດໃຫ້ກະຈ່າງ
22 ແສງທອງສ່ອງມາຈາກທິດເໜືອ
ພຣະເຈົ້າໄດ້ສະຫລອງພຣະອົງດ້ວຍລິດອຳນາດຂອງພຣະອົງຢ່າງໜ້າຢຳເກງ
23 ອົງຜູ້ມີລິດອຳນາດນັ້ນ ເຮົາຈະຄົ້ນພົບພຣະອົງບໍ່ໄດ້
ພຣະອົງຍິ່ງໃຫຍ່ ໃນເລື່ອງລິດທານຸພາບ
ຄວາມຍຸດຕິທຳແລະຄວາມທ່ຽງທຳຈຳນວນຫລວງຫລາຍ ພຣະອົງຈະບໍ່ໄດ້ຝ່າຝືນ
24 ເພາະສະນັ້ນ ມະນຸດຈຶ່ງຢຳເກງພຣະອົງ
ພຣະອົງບໍ່ໄດ້ນັບຖືຜູ້ໃດທີ່ມີໃຈປະກອບດ້ວຍສະຕິປັນຍາ”

# ບົດທີ 38

## ພຣະຜູ້ເປັນເຈົ້າຊົງຕອບໂຢບ

1 ແລ້ວພຣະຜູ້ເປັນເຈົ້າຊົງຕອບໂຢບມາຈາກພະຍຸຝົນວ່າ:
2 ເຈົ້າແມ່ນໃຜຈຶ່ງຖາມຄວາມຮອບຮູ້ຂອງເຮົາ
ເຈົ້າພຽງແຕ່ສະແດງຄວາມໂງ່ຂອງເຈົ້າເທົ່ານັ້ນ.
3 ບັດນີ້ ເຈົ້າຈົ່ງລຸກຢືນຂຶ້ນຢ່າງຜູ້ກ້າຫານ
ແລ້ວຕອບຄຳຖາມທີ່ເຮົາຈະຖາມ ຄື:
4 ເຈົ້າຢູ່ໃສເມື່ອເຮົາສ້າງໂລກ?
ຖ້າເຈົ້າຮູ້ແທ້ຈົ່ງບອກເຮົາເບິ່ງ.
5 ຜູ້ໃດກຳນົດຄວາມກວ້າງຂອງໂລກ?
ໃຜນັ່ງເຊືອກແທກເທິງໂລກ?
ເຈົ້າຮູ້ເລື່ອງນີ້ທັງໝົດແມ່ນບໍ?
6 ເສົາຄ້ຳຊູໂລກຕັ້ງຢູ່ເທິງອັນໃດ?
ໃຜເປັນຜູ້ວາງສີລາລຶກຂອງໂລກ?
7 ດາວທັງຫລາຍໄດ້ຮ້ອງເພງສັນລະເສີນພ້ອມກັນໃນເຊົ້າມື້ນັ້ນ
ແລະບັນດາບຸດຂອງພຣະເຈົ້າກໍໂຫ່ຮ້ອງສະແດງຄວາມຍິນດີ.
8 ໃຜອັດປະຕູຕັນນ້ຳທະເລໄວ້
ເມື່ອມັນລະເບີດອອກມາຈາກພື້ນແຜ່ນດິນ?
9 ແມ່ນເຮົາທີ່ເຮັດໃຫ້ເມກປົກຄຸມທະເລ
ແລະເຮັດໃຫ້ຄວາມມືດປົກຫຸ້ມຢູ່.
10 ເຮົາໄດ້ກຳນົດເຂດແດນໃຫ້ນ້ຳທະເລ
ແລະສ້າງປະຕູໃສ່ໄລກັນນ້ຳໄວ້.
11 ເຮົາໄດ້ບອກມັນວ່າ "ໄປໄດ້ໄກເທົ່ານີ້ ເລີຍໄປອີກບໍ່ໄດ້
ກະແສຄື້ນອັນແຮງກ້າຂອງເຈົ້າຈະຕ້ອງຢຸດຢູ່ນີ້."
12 ໂຢບເອີຍ ຕະຫລອດຊີວິດຂອງເຈົ້ານັ້ນ
ເຈົ້າເຄີຍບັງຄັບໃຫ້ມີແສງອະລຸນໃນຕອນເຊົ້າຫລື?
13 ເຈົ້າເຄີຍສັ່ງໃຫ້ແສງອະລຸນມາຖືກຕ້ອງໂລກ
ເພື່ອຂັບໄລ່ຄົນຊົ່ວອອກໄປຈາກບ່ອນລີ້ຂອງພວກເຂົາຫລື?
14 ແສງນັ້ນໄດ້ເຮັດໃຫ້ແລເຫັນພູທັງຫລາຍ
ເປັນເໝືອນທີ່ມເສື້ອຜ້າ.
15 ແສງສະຫວ່າງຍາມກາງເວັນໄດ້ຮຸ່ງໂພດສຳລັບຄົນຊົ່ວ
ມັນຂັດຂວາງພວກເຂົາບໍ່ໃຫ້ເຮັດການຮ້າຍ.
16 ເຈົ້າໄດ້ລົງໄປຍັງແປວທະເລເລິກແລ້ວຫລື?

ເຈົ້າຍ່າງເທິງນໍ້າມະຫາສະໝຸດໄດ້ຫລື?
17 ມີຄົນເຄີຍສະແດງໃຫ້ເຈົ້າເຫັນບໍ?
ປະຕູແຫ່ງພິພົບຄົນຕາຍ ຊຶ່ງເປັນບ່ອນມືດນັ້ນ?
18 ເຈົ້າຮູ້ຈັກບໍວ່າໂລກນີ້ໃຫຍ່ປານໃດ?
ຖ້າຮູ້ຈັກຈົ່ງບອກມາ.
19 ເຈົ້າຮູ້ຈັກບໍວ່າແສງສະຫວ່າງນັ້ນມາຈາກໃສ?
ຫລືແມ່ນຫຍັງເປັນທີ່ມາຂອງຄວາມມືດ?
20 ເຈົ້າບອກໄດ້ບໍວ່າແສງສະຫວ່າງ ແລະຄວາມມືດ
ເດີນທາງໄປໄກປານໃດ ແລະສັ່ງໃຫ້ກັບມາອີກໄດ້ບໍ?
21 ຂ້ອຍເຊື່ອແນ່ວ່າເຈົ້າຮູ້ ເພາະວ່າເຈົ້າເຖົ້າແກ່ຫລາຍແລ້ວ
ແລະເມື່ອສ້າງໂລກເຈົ້າກໍເກີດແລ້ວ.
22 ເຈົ້າເຄີຍໄປເບິ່ງບ່ອນທີ່ເຮົາເກັບຫິມະ ແລະໝາກເຫັບໄວ້ບໍ?
23 ເຮົາຈັດຕຽມມັນໄວ້ສຳລັບເວລາລຳບາກ
ແລະເວລາມີເສິກສົງຄາມ.
24 ເຈົ້າເຄີຍໄປບ່ອນຕາເວັນຂຶ້ນ
ຫລືບ່ອນລົມຕາເວັນອອກພັດມາບໍ?
25 ໃຜຂຸດປ່ອງໃຫ້ຝົນຕົກ
ແລະບອກທາງໃຫ້ຟ້າຜ່າ?
26 ໃຜເຮັດໃຫ້ຝົນຕົກລົງມາຖືກບ່ອນບໍ່ມີຄົນຢູ່?
27 ໃຜຫົດແຜ່ນດິນທີ່ແຫ້ງແລ້ງ ແລະອຶດຢາກ
ເພື່ອໃຫ້ຫຍ້າປົ່ງຂຶ້ນມາ?
28 ຝົນ ຫລື ນໍ້າຫອມມີພໍ່ຫລືບໍ່?
29 ໃຜເປັນແມ່ຂອງນໍ້າກ້ອນ ແລະນໍ້າໝອກແຂງ?
30 ຊຶ່ງເຮັດໃຫ້ນໍ້າເປັນຄືຫີນ
ແລະເຮັດໃຫ້ນໍ້າທະເລເປັນນໍ້າກ້ອນ.
31 ເຈົ້າບໍ ມັດດາວລູກໄກ່ໃຫ້ເປັນກຸ່ມ?
ຫລືເຈົ້າແກ້ເຄືອງຜູກດາວໄຖໄດ້ບໍ?
32 ເຈົ້າເຮັດໃຫ້ດວງດາວຕ່າງໆໝຸນໄປຕາມລະດູການຂອງມັນໄດ້ບໍ?
ແລະເຈົ້າພາດາວແຂ້ນ້ອຍໃຫຍ່ໄປໄດ້ບໍ?
33 ເຈົ້າຮູ້ຈັກກົດໝາຍທີ່ໃຊ້ປົກຄອງສະຫວັນຊັ້ນຟ້າບໍ?
ເຈົ້າແຕ່ງກົດໝາຍນັ້ນຂຶ້ນໃຊ້ໃນໂລກໄດ້ບໍ?
34 ເຈົ້າຮ້ອງອອກໃຫ້ເມກເທຝົນລົງມາຮຳເຈົ້າປຽກໄດ້ບໍ?
35 ຖ້າເຈົ້າສັ່ງໃຫ້ຟ້າຜ່າລົງມາ

ມັນຈະມາຫາເຈົ້າແລ້ວເວົ້າຫລືວ່າ, “ໂດຍຂ້ານ້ອຍ.”
36 ໃຜບອກນົກກຸລາ ມັນຈຶ່ງຮູ້ວ່າແມ່ນໍ້ານິນຈະຖ້ວມ?
ຫລືໃຜບອກໄກ່ຜູ້ ມັນຈຶ່ງຮູ້ວ່າຝົນຈະຕົກ?
37 ໃຜເກ່ງພໍທີ່ຈະນັບເມກໄດ້
ແລະໃຫ້ເມກນັ້ນເທຝົນລົງມາ?
38 ເພື່ອເຮັດໃຫ້ຝຸ່ນດິນໂຮມກັນເປັນກ້ອນໄດ້.
39 ເຈົ້າຫາອາຫານໃຫ້ສິງກິນ
ຫລືໃຫ້ສິງໜຸ່ມທີ່ຫິວຢາກກິນອີ່ມໄດ້ບໍ?
40 ເມື່ອມັນໝູບຢູ່ໃນຖໍ້າຂອງມັນ
ຫລືນອນຄອຍຢູ່ໃນທີ່ກຳບັງ.
41 ໃຜຈັດຫາເຫຍື່ອໃຫ້ກາ
ເມື່ອມັນບິນເຫາະໄປດ້ວຍຄວາມຫິວ
ແລະເມື່ອລູກອ່ອນຂອງມັນຮ້ອງຂໍອາຫານຕໍ່ເຮົາ.

## ບົດທີ 39

1 ເຈົ້າຮູ້ບໍວ່າແບ້ປ່າເກີດເມື່ອໃດ?
ເຈົ້າເຄີຍເຫັນກວາງເກີດບໍ?
2 ສັດເຫລົ່ານີ້ຢູ່ໃນທ້ອງແມ່ຈັກເດືອນ?
ແລະມັນເກີດເວລາໃດ?
3 ເຈົ້າຮູ້ບໍເມື່ອມັນໝູບລົງ
ແລ້ວອອກລູກມາສູ່ໂລກ?
4 ລູກອ່ອນຂອງມັນຈະເລີນເຕີບໂຕຂຶ້ນໃນກາງປາ
ມັນອອກໄປ ແລະບໍ່ກັບມາອີກ.
5 ໃຜໃຫ້ລໍປ່າແລ່ນໜີໄປ
ໃຜແກ້ເຊືອກປ່ອຍໃຫ້ມັນໄປ?
6 ເຮົາໄດ້ໃຫ້ຖິ່ນກັນດານເປັນບ່ອນຢູ່ຂອງມັນ
ແລະໃຫ້ມັນອາໄສຢູ່ໃນທົ່ງດິນເຄັມ.
7 ມັນໜີຈາກເມືອງທີ່ມີສຽງອຶກກະທຶກ
ບໍ່ມີໃຜເຝິກຫັດ ແລະໃຊ້ວຽກມັນໄດ້.
8 ພູເປັນປ່າຫຍ້າບ່ອນມັນຫາກິນ
ບ່ອນມັນຊອກຫາຫຍ້າອັນຂຽວສົດ.
9 ງົວກະທິງຈະເຮັດວຽກໃຫ້ເຈົ້າບໍ?
ມັນຈະຍອມນອນຄ້າງຄືນໃນຄອກສັດຂອງເຈົ້າບໍ?

10 ເຈົ້າເອົາເຊືອກຜູກມັນໃຫ້ໄຖນາໄດ້ບໍ?
ຫລືມັນຈະຍອມຄາດນາໃຫ້ເຈົ້າບໍ?
11 ເຈົ້າຈະເພິ່ງອາໄສໃນກຳລັງອັນມະຫາສານຂອງມັນໄດ້ບໍ?
ແລະເຈົ້າຫວັງວ່າມັນຈະເຮັດງານໜັກໃຫ້ເຈົ້າບໍ?
12 ເຈົ້າເຊື່ອວ່າມັນຈະນຳຜົນເກັບກ່ຽວຂອງເຈົ້າ
ມາຈາກລານຟາດເຂົ້າບໍ?
13 ປີກຂອງນົກກະຈອກເທດນັ້ນພັດໄວແທ້
ແຕ່ມັນກໍບິນບໍ່ໄດ້ເໝືອນນົກກະສາ.
14 ນົກກະຈອກເທດປະໄຂ່ໄວ້ໃນດິນ
ເພື່ອໃຫ້ມັນອົບອຸ່ນຢູ່ໃນດິນ.
15 ມັນບໍ່ສົນໃຈວ່າສັດອື່ນອາດຈະມາຢຽບ
ຫລືສັດປ່າອາດຈະເຮັດໃຫ້ແຕກ.
16 ມັນເຮັດເໝືອນກັບວ່າໄຂ່ນັ້ນບໍ່ແມ່ນຂອງຕົນ
ແລະບໍ່ສົນໃຈວ່າຄວາມລຳບາກຂອງມັນຈະເສຍໄປລ້າໆ.
17 ແມ່ນເຮົາຜູ້ເຮັດໃຫ້ມັນໂງ່
ແລະບໍ່ໃຫ້ສະຕິປັນຍາແກ່ມັນ.
18 ແຕ່ເມື່ອມັນແລ່ນໜີໄປ
ມັນກໍໄວກວ່າຄົນຂີ່ມ້າ.
19 ໂຢບເອີຍ ແມ່ນເຈົ້າບໍຜູ້ເຮັດໃຫ້ມ້າເກັ່ງກ້າແຂງແຮງ
ແລະໃຫ້ແຜງຍາວຫຸ້ມຄໍຂອງມັນ?
20 ເຈົ້າບໍເປັນຜູ້ເຮັດໃຫ້ມັນເຕັ້ນໄດ້ເໝືອນຕັກແຕນ
ແລະເຮັດໃຫ້ສຽງຫີງໜ້າຢ້ານກົວ?
21 ມັນເກືອກກົ້ວດິນໃນຮ່ອມພູຢ່າງຫ້າວຫານ
ມັນແລ່ນເຂົ້າສະໜາມຮົບໝົດກຳລັງຂອງມັນ.
22 ມັນບໍ່ຮູ້ຈັກຄຳວ່າຢ້ານ
ບໍ່ຖອຍໜີດາບ.
23 ອາວຸດຂອງຄົນຜູ້ຂີ່ມ້າ
ມີສຽງດັງ ແລະແສງອາວຸດຕອບຕາເວັນ.
24 ມ້າໄດ້ແລ່ນໄປໜ້າດ້ວຍໃຈຫ້າວຫານຕື່ນເຕັ້ນ
ມັນບໍ່ຢືນຢູ່ນິ້ງເມື່ອແກດັງຂຶ້ນ.
25 ມ້າໄດ້ຫີງເວລາເປົ່າແກ
ມັນຮູ້ຈັກວ່າມີສົງຄາມກ່ອນເຂົ້າໄປໃກ້
ແລະໄດ້ຍິນເມື່ອນາຍທະຫານຮ້ອງບອກ.

26 ແຫລວບິນເປັນຍ້ອນເຈົ້າບໍ
ເມື່ອມັນກາງປີກບິນໄປທາງທິດໃຕ້?
27 ນົກອິນຊີເຮັດຮັງໃນທີ່ສູງເທິງພູ
ມັນຄອຍຟັງຄຳສັ່ງຂອງເຈົ້າບໍ?
28 ມັນເຮັດຮັງຂອງມັນເທິງໂງ່ນຫີນສູງ
ເຮັດປ້ອມເຂັ້ມແຂງຢູ່ຍອດພູສູງ.
29 ມັນຫລຽວຄອຍເບິ່ງໃກ້ ແລະໄກຈາກທີ່ນັ້ນ
ເພື່ອຈອບຈັບສັດມາກິນເປັນອາຫານ.
30 ຝູງແຮ້ງຍ່ອມທຸ້ມຢູ່ໃນຊາກສົບ
ແລະລູກຂອງມັນກໍດູດກິນເລືອດ.

## ບົດທີ 40

1ພຣະຜູ້ເປັນເຈົ້າຊົງກ່າວຕໍ່ໂຢບວ່າ:
2 ໂຢບເອີຍ ເຈົ້າໄດ້ທ້າທາຍພຣະເຈົ້າຜູ້ມີອຳນາດຍິ່ງໃຫຍ່
ບັດນີ້ເຈົ້າຈະເຊົາ ຫລືວ່າຍັງຈະເວົ້າຢູ່.
3 ໂຢບທູນຕອບພຣະຜູ້ເປັນເຈົ້າວ່າ:
4 ຂ້າແດ່ພຣະຜູ້ເປັນເຈົ້າຂ້ານ້ອຍໂງ່ຫລາຍ
ຈະຕອບພຣະອົງໄດ້ຢ່າງໃດ
ຂ້ານ້ອຍຈະບໍ່ທູນອັນໃດອີກ.
5 ຂ້ານ້ອຍເວົ້າຫລາຍເກີນໄປແລ້ວ
6ແລ້ວພຣະຜູ້ເປັນເຈົ້າຊົງກ່າວຕໍ່ໂຢບມາຈາກລົມພະຍຸອີກວ່າ:
7 ບັດນີ້ຈົ່ງຢືນຂຶ້ນຢ່າງຜູ້ກ້າຫານ
ຈົ່ງຕອບຄຳຖາມຂອງເຮົາ.
8 ເຈົ້າຈະເວົ້າວ່າເຮົາບໍ່ຍຸດຕິທຳ
ວ່າເຮົາເປັນຝ່າຍຜິດແລະເຈົ້າເປັນຝ່າຍຖືກຫລື?
9 ເຈົ້າມີລິດອຳນາດເໝືອນເຮົາຫລື?
ເຈົ້າໃຫ້ສຽງຂອງເຈົ້າດັງສະທ້ານຫວັ່ນໄຫວເໝືອນສຽງເຮົາໄດ້ຫລື?
10 ຖ້າເຈົ້າເຮັດໄດ້ ຈົ່ງຢືນຂຶ້ນຢ່າງມີກຽດ ແລະພາກພູມໃຈ
ຈົ່ງສວມກອດເອົາຄວາມຍິ່ງໃຫຍ່ ແລະສະຫງ່າລາສີ.
11 ຈົ່ງເບິ່ງຄົນທັງຫລາຍຜູ້ວາງຕົວສູງ
ຈົ່ງເທຄວາມຄຽດຮ້າຍຂອງເຈົ້າອອກມາ
ແລ້ວເຮັດໃຫ້ພວກເຂົາຖ່ອມຕົວລົງ.
12 ຈົ່ງເບິ່ງຜູ້ວາງຕົວສູງ ແລ້ວເຮັດໃຫ້ພວກເຂົາວາງຕົວຕ່ຳລົງ

ຈຶ່ງກຳຈັດຄົນອະທຳໃຫ້ດັບໄປກັບບ່ອນ.
13 ໃຫ້ຝັງພວກເຂົາທັງໝົດໄວ້ໃນດິນ
ມັດພວກເຂົາໄວ້ໃນພິພົບຄົນຕາຍ.
14 ແລ້ວເຮົາເອງຈະສັນລະເສີນເຈົ້າ
ແລະຍອມຮັບວ່າເຈົ້າເອງມີໄຊຊະນະແລ້ວ.
15 ຈົ່ງເບິ່ງແຮດຕົວແປກປະຫລາດດຸ
ເຮົາໄດ້ສ້າງມັນແລະສ້າງເຈົ້າ
ມັນກິນຫຍ້າເໝືອນງົວ.
16 ແຕ່ມັນມີເຫື່ອແຮງຫລາຍ
ແລະກ້າມຊີ້ນຂອງມັນກໍແຂງແຮງ.
17 ຫາງຂອງມັນຕັ້ງຊັນຂຶ້ນເໝືອນກົກສົນ
ກ້າມຊີ້ນໃນກົກຂາຂອງມັນກໍມີກຳລັງແຂງແຮງ.
18 ກະດູກຄໍແຂງແຮງເໝືອນທອງສຳລິດ
ແລະແຂ່ງຂາກໍເໝືອນທ່ອນເຫລັກ.
19 ສັດອັນໜ້າອັດສະຈັນທີ່ສຸດນີ້ແມ່ນເຮົາສ້າງ
ຜູ້ສ້າງມັນເທົ່ານັ້ນຈຶ່ງຈະຊະນະມັນໄດ້.
20 ມັນກິນຫຍ້າຢູ່ເທິງພູ
ບ່ອນທີ່ສັດປ່າຫລິ້ນ.
21 ມັນນອນຢູ່ລຸ່ມກົກໜາມ
ແລະທ່າມກາງກົກອໍ້ໃນໜອງບຶງ.
22 ກົກໜາມ ແລະກົກຊະໂນໃກ້ນໍ້າ
ໄດ້ເປັນຮົ່ມກຳບັງມັນໄວ້.
23 ມັນບໍ່ຢ້ານແມ່ນໍ້າທີ່ໄຫລແຮງ
ມັນຢຸດນິ້ງເມື່ອນໍ້າໄຫລຫລັ່ງໜ້າມັນ.
24 ໃຜສາມາດເຮັດໃຫ້ຕາມັນບອດ ແລະຈັບມັນໄປໄດ້?
ຫລືໃຜສາມາດເຮັດແຮ້ວດັກຈັບມັນໄດ້?

## ບົດທີ 41

1 ເຈົ້າໃສ່ເບັດເອົາເງືອກໄດ້ບໍ?
ຫລືເອົາເຊືອກຜູກລີ້ນຂອງມັນໄດ້ບໍ?
2 ເຈົ້າຈະເອົາເຊືອກສົນເຄົາມັນໄດ້ບໍ?
ຫລືເອົາຂໍເກາະປາກມັນໄດ້ບໍ?
3 ມັນຈະຂໍໃຫ້ເຈົ້າປ່ອຍຫລືບໍ່?

ມັນຈະຂໍຄວາມເມດຕາຈາກເຈົ້າດ້ວຍຄໍາອ່ອນຫວານຫລື?
4 ມັນຈະຍອມຕົກລົງກັບເຈົ້າ
ຫລືສັນຍາວ່າຈະຮັບໃຊ້ເຈົ້າຕະຫລອດໄປບໍ?
5 ເຈົ້າຈະເອົາມັນມາໃສ່ຕຸ້ມເໝືອນນົກໄດ້ບໍ?
ຫລືເໝືອນສິ່ງໜຶ່ງທີ່ລູກສາວຂອງເຈົ້າຢອກຫລິ້ນ.
6 ພວກຫາປາຈະຂາຍມັນບໍ່ໄດ້ບໍ?
ພວກພໍ່ຄ້າຈະຕັດມັນຂາຍໄດ້ບໍ?
7 ເຈົ້າຈະເອົາຫອກແທງໜັງຂອງມັນ
ຫລືເອົາຫລາວແທງຫົວຂອງມັນໄດ້ບໍ?
8 ຖ້າເຈົ້າໄດ້ສູ້ກັບມັນເທື່ອໜຶ່ງ ແລ້ວເຈົ້າຈະບໍ່ຢາກສູ້ອີກ
ເຈົ້າຈະເຂັດຫລາບໃນການຕໍ່ສູ້ນັ້ນ.
9 ເມື່ອຄົນໃດຄົນໜຶ່ງພົບເຫັນຕົວເງືອກ
ຄົນນັ້ນຕ້ອງໝົດຄວາມກ້າ ແລະລົ້ມລົງດິນ.
10 ເມື່ອຢອກລໍ້ມັນ ມັນຈະຮ້າຍຢ່າງຮຸນແຮງ
ບໍ່ມີໃຜກ້າພໍທີ່ຈະຢືນຕໍ່ໜ້າມັນໄດ້.
11 ມີໃຜທີ່ຕໍ່ສູ້ມັນແລ້ວໄດ້ຮັບຄວາມປອດໄພ?
ບໍ່ມີໃຜໃນໂລກເຮັດຢ່າງນັ້ນໄດ້.
12 ໃຫ້ເຮົາບອກເຈົ້າກ່ຽວກັບແຂ່ງຂາຂອງມັນ
ແລະກ່ຽວກັບກໍາລັງອັນຍິ່ງໃຫຍ່ຂອງມັນ.
13 ບໍ່ມີໃຜສາມາດລອກໜັງຂອງມັນອອກໄດ້
ຫລືບໍ່ມີໃຜສາມາດແທງໜັງຂອງມັນຊອດ.
14 ໃຜເຮັດໃຫ້ມັນອ້າປາກໄດ້?
ປາກຂອງມັນກໍເຕັມດ້ວຍແຂ້ວອັນໜ້າຢ້ານຫລາຍ.
15 ຫລັງຂອງມັນກໍຕິດແຜ່ນເຫລັກຕ້ານທານໄວ້ເປັນແຖວ
ຕິດແຈບສະໜິດ ແລະແຂງເໝືອນຫີນ.
16 ແຕ່ລະອັນຕິດກັນແຈບຫລາຍ
ແມ່ນແຕ່ລົມກໍຜ່ານບໍ່ໄດ້.
17 ແຜ່ນເຫລັກຕ້ານທານທັງໝົດນັ້ນຕໍ່ຊື່ງກັນແລະກັນ
ບໍ່ມີຫຍັງຈະເຮັດໃຫ້ມັນແຍກອອກຈາກກັນໄດ້.
18 ເມື່ອມັນຈາມປ່ອຍແສງສະຫວ່າງອອກມາ
ຕາຂອງມັນລຸກໄໝ້ເໝືອນແສງຕາເວັນ.
19 ມີແປວໄຟຮ້ອນຮົນອອກມາຈາກປາກຂອງມັນ
ແລະມີປະກາຍໄຟປີວອອກມາ.

20 ມີຄວັນອອກມາຈາກຮູດັງຂອງມັນ
ເໝືອນຄວັນຈູດຫຍ້າຈາກກົ້ນໝໍ້ໃນເຕົາໄຟ.
21 ລົມຫາຍໃຈຂອງມັນຮ້ອນຈົນເປັນໄຟ
ມີແປວໄຟອອກມາຈາກປາກຂອງມັນ.
22 ຄໍຂອງມັນມີລິດອຳນາດຫລາຍ
ທຸກໆຄົນທີ່ພົບເຫັນມັນຈະສະທ້ານຢ້ານກົວ.
23 ໜັງຂອງມັນບໍ່ມີບ່ອນອ່ອນ
ມັນແຂງເໝືອນເຫລັກກ້າ.
24 ຫົວໃຈຂອງມັນແຂງແຮງເໝືອນຫີນບໍ່ຢ້ານກົວຫຍັງ
ບໍ່ຍອມຈຳນົນ ແລະແຂງເໝືອນຫີນໂມ້ແປ້ງ.
25 ເມື່ອມັນໂປໂລຂຶ້ນ ຜູ້ມີລິດອຳນາດກໍຕົກໃຈຢ້ານ
ພວກເຂົາຢ້ານຈົນເຮັດຫຍັງບໍ່ເປັນ.
26 ຈະເອົາດາບແທງມັນກໍບໍ່ໄດ້
ແມ່ນແຕ່ຫອກ ລູກທະນູ ຫລືຫລາວທຳຮ້າຍມັນກໍບໍ່ໄດ້.
27 ເຫລັກກ້ານັ້ນເໝືອນກັບເຟືອງສຳລັບມັນ
ແລະທອງສຳລິດເໝືອນໄມ້ດອກ.
28 ລູກທະນູເຮັດໃຫ້ມັນໜີໄປບໍ່ໄດ້
ແກວ່ງກ້ອນຫີນໃສ່ມັນເໝືອນເອົາເຟືອງຕີ.
29 ໄມ້ຄ້ອນເໝືອນກັບຕໍເຟືອງສຳລັບມັນ
ມັນຫົວຂວັນເມື່ອຄົນຊັດຫອກໃສ່.
30 ເລັບຂອງມັນແຫລມເໝືອນກະບົ້ງໝໍ້ແຕກ
ມັນຂຸດຕົມຂຶ້ນເວລາມັນໄປ.
31 ມັນເຮັດໃຫ້ນ້ຳທະເລເປັນຟອງເໝືອນໝໍ້ຕົ້ມນ້ຳຟົດ
ແລະເຮັດໃຫ້ນ້ຳທະເລຟົດຂຶ້ນເໝືອນຕົ້ມນ້ຳມັນ.
32 ມັນປ່ອຍທາງຂາວແຈ້ງໄວ້ຂ້າງຫລັງ
ແລະເຮັດໃຫ້ນ້ຳທະເລເປັນຟອງຂາວ.
33 ບໍ່ມີຫຍັງທຽບກັບມັນໃນໂລກ
ເຮົາສ້າງຂຶ້ນມາບໍ່ໃຫ້ມີຄວາມຢ້ານ.
34 ມັນບໍ່ຈົ້ສັດທີ່ດີ້ຖືຕົວ
ມັນເປັນລາຊາຂອງສັດປ່າທັງປວງ.

# ບົດທີ 42

1ຕໍ່ມາ ໂຢບໄດ້ກາບທູນພຣະຜູ້ເປັນເຈົ້າວ່າ:

[2] ຂ້າແດ່ພຣະຜູ້ເປັນເຈົ້າ ຂ້ານ້ອຍຮູ້ວ່າພຣະອົງຊົງລິດທານຸພາບສູງສຸດ
ພຣະອົງຊົງກະທຳທຸກສິ່ງໄດ້.
[3] ພຣະອົງຊົງຖາມວ່າ ເປັນຫຍັງຂ້ານ້ອຍຈຶ່ງກ້າໄຕ່ຖາມການກະທຳຂອງພຣະອົງ
ໃນເມື່ອຂ້ານ້ອຍຍັງເປັນຄົນໂງ່ຫລາຍ
ຂ້ານ້ອຍເວົ້າເຖິງສິ່ງທີ່ຂ້ານ້ອຍບໍ່ເຂົ້າໃຈ
ສິ່ງທີ່ປະຫລາດເກີນສຳລັບຂ້ານ້ອຍ.
[4] ພຣະອົງຊົງບອກໃຫ້ຂ້ານ້ອຍຮັບຟັງເວລາພຣະອົງກ່າວ
ແລະໃຫ້ພະຍາມານຕອບຄຳຖາມຂອງພຣະອົງ.
[5] ຂະນະນັ້ນ ຂ້ານ້ອຍຮູ້ແຕ່ສິ່ງທີ່ຄົນອື່ນບອກເທົ່ານັ້ນ
ແຕ່ບັດນີ້ຂ້ານ້ອຍໄດ້ເຫັນພຣະອົງດ້ວຍຕາຂ້ານ້ອຍເອງ.
[6] ດັ່ງນັ້ນ ຂ້ານ້ອຍຈຶ່ງລະອາຍຕໍ່ສິ່ງທັງປວງທີ່ຂ້ານ້ອຍໄດ້ກ່າວ
ແລະໄດ້ປ່ຽນໃຈໄປນັ່ງຢູ່ໃນຝຸ່ນດິນ ແລະຂີ້ເຖົ່າຍ້ອນອຸກໃຈ.

## ຂໍ້ຄວາມສຸດທ້າຍ

[7]ຫລັງຈາກ ພຣະຜູ້ເປັນເຈົ້າ ຊົງກ່າວຄຳທັງປວງນີ້ຕໍ່ ໂຢບ ແລ້ວ ພຣະອົງກໍຊົງກ່າວຕໍ່ ເອລີຟັດ
ວ່າ, “ເຮົາຮ້າຍ ເຈົ້າກັບ ເພື່ອນສອງຄົນຂອງ ເຈົ້າ ເພາະພວກ ເຈົ້າບໍ່ ເວົ້າຄວາມຈິງກ່ຽວກັບ ເຮົາ
ເໝືອນຢ່າງທີ່ ໂຢບ ຜູ້ຮັບໃຊ້ຂອງ ເຮົາໄດ້ເວົ້ານັ້ນ. [8]ບັດນີ້ ຈົ່ງເອົາງົວເຖິກເຈັດໂຕກັບແກະເຖິກ
ເຈັດໂຕໄປຫາ ໂຢບ ແລະເຜົາຖວາຍບູຊາສຳລັບພວກເຈົ້າເອງ ໂຢບ ຈະອ້ອນວອນສຳລັບພວກ
ເຈົ້າ ເຮົາຈະຕອບຄຳອ້ອນວອນຂອງລາວ ແລະຈະບໍ່ລົງໂທດພວກເຈົ້າຕາມທີ່ເຈົ້າຄວນຈະໄດ້
ຮັບ ເພາະພວກເຈົ້າບໍ່ເວົ້າຄວາມຈິງກ່ຽວກັບເຮົາເໝືອນ ໂຢບ ໄດ້ເວົ້າ.”

[9]ເອລີຟັດ ບິນດັດ ແລະ ໂຊຟາ ໄດ້ເຮັດຕາມທີ່ ພຣະຜູ້ເປັນເຈົ້າ ຊົງບອກ ແລະ ພຣະຜູ້ເປັນ-
ເຈົ້າ ກໍຊົງຕອບຄຳອ້ອນວອນຂອງ ໂຢບ.

[10]ຫລັງຈາກ ໂຢບ ໄດ້ອ້ອນວອນສຳລັບເພື່ອນສາມຄົນຂອງລາວແລ້ວ ພຣະຜູ້ເປັນເຈົ້າ ໄດ້ຊົງ
ເຮັດໃຫ້ ໂຢບ ອຸດົມສົມບູນຂຶ້ນອີກ ຊົງໃຫ້ລາວມີຂອງເພີ່ມຂຶ້ນອີກສອງເທົ່າ. [11]ພວກນ້ອງຊາຍ ນ້ອງ
ສາວ ແລະເພື່ອນຝູງກ່ອນໆ ທັງໝົດຂອງ ໂຢບ ໄດ້ມາຢ້ຽມຢາມ ແລະຮ່ວມກິນລ້ຽງໃນເຮືອນຂອງ
ລາວ ພວກເຂົາໄດ້ສະແດງຄວາມເຫັນໃຈ ແລະເລົ້າໂລມລາວເຖິງການຍາກລຳບາກທີ່ ພຣະຜູ້ເປັນ-
ເຈົ້າ ຊົງນຳມາທົດລອງລາວນັ້ນ ທຸກໆ ຄົນໄດ້ໃຫ້ເງິນ ແລະແຫວນຄຳຜູ້ລະວົງແກ່ລາວ.

[12]ພຣະຜູ້ເປັນເຈົ້າ ຊົງອວຍພອນໃຫ້ ໂຢບ ໃນຊີວິດບັ້ນປາຍຫລາຍກວ່າຊີວິດບັ້ນຕົ້ນ ໂຢບ ໄດ້
ເປັນເຈົ້າຂອງແກະສິບສີ່ພັນໂຕ ອູດຫົກພັນໂຕ ງົວກວຽນພັນຄູ່ ແລະລໍພັນໂຕ. [13]ລາວໄດ້ເປັນພໍ່
ຂອງລູກຊາຍເຈັດຄົນ ແລະລູກສາວສາມຄົນ. [14]ລາວໄດ້ເອີ້ນຊື່ລູກສາວກົກວ່າ ເຢມີມາ ເອີ້ນຜູ້
ຖ້ວນສອງວ່າ ເກຊີຢາ ແລະຜູ້ຖ້ວນສາມວ່າ ເກເຣັນຮາປຸກ. [15]ໃນໂລກນີ້ບໍ່ມີຍິງໃດໝົດງາມ
ເທົ່າລູກສາວຂອງ ໂຢບ ພໍ່ຂອງພວກນາງໄດ້ແບ່ງມໍລະດົກໃຫ້ພວກນາງເໝືອນກັບໃຫ້ພວກອ້າຍ.

[16]ຕໍ່ຈາກນີ້ໄປ ໂຢບ ໄດ້ມີຊີວິດຢູ່ອີກ ຮ້ອຍສີ່ສິບປີ ຈົນໄດ້ເຫັນຫລານ ເຫລັນຂອງລາວ.
[17]ແລະລາວກໍສິ້ນຊີວິດໃນເວລາເຖົ້າແກ່ທີ່ສຸດ.

# ເພງສັນລະເສີນ

## ບົດທີ 1

### ຄວາມສຸກອັນແທ້ຈິງ

1 ຄວາມສຸກເປັນຂອງຄົນ ຜູ້ທີ່ບໍ່ເຮັດຕາມຄຳແນະນຳຂອງຄົນຊົ່ວ
ຜູ້ທີ່ບໍ່ປະພຶດຕາມແບບຢ່າງຂອງຄົນບາບ ຫລືບໍ່ຕິດພັນກັບພວກທີ່ປະໝາດ ພຣະເຈົ້າ.
2 ແຕ່ວ່າຄວາມສຸກເປັນຂອງຜູ້ທີ່ມັກອ່ານພຣະທຳຂອງ ພຣະຜູ້ເປັນເຈົ້າ
ແລະຮຽນຮູ້ເອົາທຸກມື້ທຸກຄືນ.
3 ຄົນຜູ້ນີ້ເປັນຄືຕົ້ນໄມ້ທີ່ປູກໃກ້ລຳນໍ້າ ຊຶ່ງມີໃບຂຽວສົດງົດງາມ
ແລະເກີດໝາກຕາມລະດູ ລາວກະທຳທຸກສິ່ງກໍສຳເລັດຜົນ.

4 ແຕ່ວ່າຄົນຊົ່ວບໍ່ເປັນຢ່າງນີ້ເລີຍ
ລາວເປັນເໝືອນຂີ້ແກບທີ່ລົມພັດປິວໄປ.
5 ພຣະເຈົ້າ ຈະຕັດສິນລົງໂທດຄົນຊົ່ວ
ຄົນບາບຈະຖືກກຳຈັດໜີຈາກຄົນຊອບທຳ

6 ພຣະຜູ້ເປັນເຈົ້າ ຊົງພິພາກສາຄົນຊອບທຳ
ແຕ່ວ່າຄົນຊົ່ວຈະຖືກປະປ່ອຍໃຫ້ດັບສູນໄປ.

## ບົດທີ 2

### ພຣະເຈົ້າຊົງເລືອກເອົາເຈົ້າຊີວິດ

1 ເປັນຫຍັງຊົນຊາດຕ່າງໆ ຈຶ່ງກໍ່ການກະບົດຂຶ້ນ?
ເປັນຫຍັງປະຊາຊົນເຫລົ່ານີ້ຈຶ່ງວາງແຜນຢ່າງບໍ່ມີປະໂຫຍດ.
2 ເຈົ້າຊີວິດທັງຫລາຍຂອງພວກເຂົາ
ກໍ່ການປະຕິວັດຕໍ່ສູ້ ພຣະເຈົ້າ
ພວກຜູ້ປົກຄອງກໍພາກັນຄິດຮ້າຍ
ຕໍ່ ພຣະຜູ້ເປັນເຈົ້າ ແລະເຈົ້າຊີວິດທີ່ພຣະອົງຊົງເລືອກໄວ້.
3 ພວກເຂົາເຈົ້າເວົ້າວ່າ,
ຂໍໃຫ້ພວກເຮົາເປັນອິດສະຫລະ
ຈາກການປົກຄອງຂອງພຣະອົງ
ຂໍພວກເຮົາໜີໃຫ້ພົ້ນຈາກການບັງຄັບຂອງພຣະອົງ.

4 ຝ່າຍ ພຣະຜູ້ເປັນເຈົ້າ ກໍຊົງຫົວຂວັນ ແລະເຍາະເຍີ້ຍພວກເຂົາ
ຈາກພຣະລາຊະບັນລັງໃນສະຫວັນຊັ້ນຟ້າ.

5 ພຣະອົງຊົງກ່າວຕໍ່ພວກເຂົາດ້ວຍພຣະພິໂລດ
ແລະຊົງເຮັດໃຫ້ພວກເຂົາແຕກຕື່ນຕົກໃຈດ້ວຍຄວາມໂກດຮ້າຍຂອງພຣະອົງ.
6 ພຣະອົງຊົງກ່າວວ່າ,
"ເຮົາໄດ້ແຕ່ງຕັ້ງເຈົ້າຊີວິດຂອງເຮົາໄວ້ເທິງຊີໂອນ
ຄືພູສັກສິດຂອງເຮົາ."

7 ເຈົ້າຊີວິດເມືອງຊີໂອນກ່າວຂຶ້ນວ່າ,
"ຂ້ານ້ອຍຈະບອກເຖິງຄຳທີ່ພຣະຜູ້ເປັນເຈົ້າຊົງບັນຍັດໄວ້"
ພຣະຜູ້ເປັນເຈົ້າຊົງກ່າວແກ່ຂ້ານ້ອຍວ່າ,
"ມື້ນີ້ເຮົາໄດ້ຮັບເຈົ້າເປັນລູກຊາຍຂອງເຮົາ ເຮົາເປັນພໍ່ຂອງເຈົ້າ."
8 ຈົ່ງຂໍ ແລ້ວເຮົາຈະມອບຊົນຊາດທັງຫລາຍໃຫ້ແກ່ເຈົ້າ
ໝົດທັງໂລກຈະເປັນຂອງເຈົ້າ.
9 ເຈົ້າຈະໃຊ້ອຳນາດປົກຄອງພວກເຂົາ
ເຈົ້າຈະຕີພວກເຂົາແຕກເໝືອນຕີໝໍ້ດິນ.

10 ບັດນີ້ ເຈົ້າຊີວິດທັງຫລາຍເອີຍ ຈົ່ງຕັ້ງໃຈຟັງເທີ້ນ
ທັງພວກຜູ້ປົກຄອງຈົ່ງເອົາໃຈໃສ່.
11-12 ຈົ່ງຮັບໃຊ້ພຣະຜູ້ເປັນເຈົ້າດ້ວຍຄວາມເຄົາລົບຢຳເກງ
ຈົ່ງຖ່ອມຕົວລົງຕໍ່ພຣະພັກຂອງພຣະອົງ
ຖ້າພຣະອົງຊົງພຣະພິໂລດ ພວກເຈົ້າຈະຕ້ອງຕາຍ
ເພາະພຣະອົງຊົງພຣະພິໂລດຢ່າງຮ້າຍແຮງ
ຄວາມສຸກເປັນຂອງທຸກຄົນທີ່ໄປຫາພຣະອົງ
ເພື່ອຂໍຄວາມຄຸ້ມຄອງ.

# ບົດທີ 3

## ຄຳອ້ອນວອນໃນຕອນເຊົ້າຂໍໃຫ້ຊ່ອຍຊູ

1 ຂ້າແດ່ອົງພຣະຜູ້ເປັນເຈົ້າຂ້ານ້ອຍນີ້ມີສັດຕູຫລາຍຄົນ
ມີຫລາຍຄົນທີ່ສຸດທີ່ຫັນມາຕໍ່ສູ້ຂ້ານ້ອຍ!
2 ສັດຕູຫລາຍເວົ້າເຖິງຂ້ານ້ອຍວ່າ
"ພຣະເຈົ້າຈະບໍ່ຊ່ອຍເຫລືອຄົນແບບລາວດອກ."

*ເຊລາ*

3 ໂອ ຂ້າແດ່ພຣະຜູ້ເປັນເຈົ້າເອີຍ
ພຣະອົງເປັນໂລ່ຂອງຂ້ານ້ອຍເລື້ອຍມາ
ພຣະອົງໃຫ້ຂ້ານ້ອຍໄດ້ຮັບໄຊຊະນະ ແລະຊ່ອຍຊູ
ຂ້ານ້ອຍໃຫ້ມີຄວາມກ້າຫານຂຶ້ນອີກ.

4 ຂ້ານ້ອຍຮ້ອງຫາ ພຣະຜູ້ເປັນເຈົ້າ ໃຫ້ຊ່ອຍເຫລືອ
ແລະຈາກເນີນພູສັກສິດ ພຣະອົງຕອບຂ້ານ້ອຍ

*ເຊລາ*

5 ຂ້ານ້ອຍຢຽດຕົວລົງ ແລະນອນນິ້ງຫລັບໄປ
ຕະຫລອດຄືນ ພຣະຜູ້ເປັນເຈົ້າ ຮັກສາຂ້ານ້ອຍໄວ້
6 ຂ້ານ້ອຍບໍ່ຢ້ານ ເຫລົ່າສັດຕູເປັນໝື່ນເປັນແສນ
ທີ່ຢູ່ອ້ອມຂ້າງອ້ອມແອວຂ້ານ້ອຍນັ້ນ.

7 ຈົ່ງຮີບມາເຖີດພຣະຜູ້ເປັນເຈົ້າ!ພຣະເຈົ້າ ເອີຍ ໂຜດຊ່ອຍແດ່!
ໂຜດລົງໂທດສັດຕູທຸກຄົນໃຫ້ໝົດລິດທີ່ຈະທຳລາຍຂ້ານ້ອຍ.
8 ພຣະຜູ້ເປັນເຈົ້າ ເທົ່ານັ້ນທີ່ໃຫ້ຂ້ານ້ອຍໄດ້ມີໄຊ
ຂໍພຣະອົງອວຍໄຊໃຫ້ພອນປະຊາຊົນຂອງພຣະອົງດ້ວຍເທີ້ນ.

*ເຊລາ*

# ບົດທີ 4

*ເຖິງຫົວໜ້ານັກຮ້ອງທີ່ໃຊ້ເຄື່ອງຫຼິ້ນມີສາຍ ເພງສັນລະເສີນຂອງດາວິດ*

1 ຂ້າແດ່ພຣະເຈົ້າຜູ້ຊົງເຮັດໃຫ້ຂ້ານ້ອຍເປັນຝ່າຍຊອບທຳ
ຂໍໂຜດຮັບຟັງເມື່ອຂ້ານ້ອຍຮ້ອງທູນ
ເມື່ອຂ້ານ້ອຍພົບຄວາມເດືອດຮ້ອນ ຂໍພຣະອົງປະທານຊ່ອງທາງໃຫ້
ຂໍໂຜດເມດຕາໃຫ້ແກ່ຂ້ານ້ອຍ
ແລະໂຜດຮັບຟັງຄຳອ້ອນວອນຂອງຂ້ານ້ອຍ
2 ທ່ານທັງຫລາຍເອີຍ ຂ້ານ້ອຍຈະຕ້ອງເສຍກຽດອີກດົນປານໃດ?
ທ່ານຈະຮັກສິ່ງບໍ່ມີປະໂຫຍດ
ແລະສະແຫວງຫາການຂີ້ຕົວະອີກດົນເທົ່າໃດ

*ເຊລາ*

3 ຈົ່ງຮູ້ເສຍວ່າພຣະຜູ້ເປັນເຈົ້າຮັກສາຄົນຊອບທຳໄວ້ສຳລັບພຣະອົງ
ພຣະຜູ້ເປັນເຈົ້າ ຈະຮັບຟັງເມື່ອຂ້ານ້ອຍຮ້ອງຫາພຣະອົງ
4 ຮ້າຍກໍຮ້າຍສາ ແຕ່ຢ່າເຮັດບາບ
ຈົ່ງຄຶດຕຶກຕອງໃນໃຈເວລາຢູ່ເທິງຕຽງນອນ ແລະສະຫງົບຢູ່

*ເຊລາ*

5 ຈົ່ງຖວາຍເຄື່ອງສັດບູຊາອັນຖືກຕ້ອງແກ່ພຣະຜູ້ເປັນເຈົ້າ
ແລະຈົ່ງໄວ້ວາງໃຈໃນພຣະອົງ
6 ມີຄົນເປັນຈຳນວນຫລາຍກ່າວວ່າ
“ໂອ ເຮົາຈະເຫັນສິ່ງດີໆ

ຂ້າແດ່ພຣະຜູ້ເປັນເຈົ້າ ຂໍເງີຍພຣະພັກທີ່ສະຫວ່າງຂອງພຣະອົງມາເໜືອ
ຂ້ານ້ອຍທັງຫລາຍ”
7 ພຣະອົງໄດ້ປະທານຄວາມຊື່ນບານໃຫ້ແກ່ຈິດໃຈຂອງຂ້ານ້ອຍ
ຫລາຍກວ່າເມື່ອພວກຂ້ານ້ອຍໄດ້ເຂົ້າແລະນໍ້າອະງຸ່ນຢ່າງຫລວງຫລາຍ
8 ຂ້ານ້ອຍຈະນອນຫລັບດ້ວຍຄວາມສະຫງົບ ຂ້າແດ່ພຣະຜູ້ເປັນເຈົ້າ
ເພາະພຣະອົງເທົ່ານັ້ນທີ່ເຮັດໃຫ້ຂ້ານ້ອຍອາໄສຢູ່ຢ່າງປອດໄພ

# ບົດທີ 5

## ຄໍາອ້ອນວອນຂໍການຄຸ້ມຄອງຮັກສາ ຄົນອະທໍາບໍ່ຮັບພຣະເມດຕາ

*ເຖິງຫົວໜ້ານັກຮ້ອງໃຊ້ເຄື່ອງເປົ່າ ເພງສັນລະເສີນຂອງດາວິດ*

1 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຫງ່ຽງພຣະກັນຮັບຟັງຖ້ອຍຄໍາຂອງຂ້ານ້ອຍ
ຂໍພິຈາລະນາສຽງຮ້ອງຂອງຂ້ານ້ອຍ
2 ຂ້າແດ່ພຣະມະຫາກະສັດ ແລະພຣະເຈົ້າຂອງຂ້ານ້ອຍ
ຂໍຟັງສຽງຮ້ອງທູນຂອງຂ້ານ້ອຍ ເພາະຂ້ານ້ອຍອະທິຖານທູນຕໍ່ພຣະອົງ
3 ຂ້າແດ່ພຣະຜູ້ເປັນເຈົ້າ
ໃນເວລາເຊົ້າ ພຣະອົງຮັບຟັງສຽງຂອງຂ້ານ້ອຍ
ໃນເວລາເຊົ້າຂ້ານ້ອຍຈະຕຽມຄໍາອະທິຖານທູນຕໍ່ພຣະອົງ
ແລະເຝົ້າຄອຍຖ້າເບິ່ງພຣະອົງຢູ່
4 ດ້ວຍວ່າພຣະອົງບໍ່ໄດ້ເປັນພຣະເຈົ້າຜູ້ປິຕິຍິນດີໃນຄວາມຊົ່ວ
ຄວາມຊົ່ວຮ້າຍຈະບໍ່ອາໄສຢູ່ກັບພຣະອົງ
5 ຄົນໂງ່ຈ້າຈະບໍ່ຢືນຢູ່ສະເພາະພຣະເນດຂອງພຣະອົງ
ພຣະອົງກຽດຊັງຜູ້ກະທໍາຄວາມຊົ່ວຊ້າທັງໝົດ
6 ພຣະອົງຈະທໍາລາຍຜູ້ທີ່ເວົ້າຂີ້ຕົວະ
ພຣະຜູ້ເປັນເຈົ້າຈະກຽດຊັງຜູ້ທີ່ກະຫາຍເລືອດ
ແລະຄົນຫລອກລວງ

## ດາວິດວາງໃຈວ່າພຣະເຈົ້າຈະນໍາທາງຕົນ

7 ແຕ່ໂດຍຄວາມເມດຕາອັນບໍລິບູນຂອງພຣະອົງ
ຂ້ານ້ອຍຈະເຂົ້າໄປໃນພຣະວິຫານຂອງພຣະອົງ
ຂ້ານ້ອຍຈະນະມັດການໃນພຣະວິຫານອັນບໍລິສຸດຂອງພຣະອົງ
ດ້ວຍຄວາມຢໍາເກງພຣະອົງ
8 ຂ້າແດ່ພຣະຜູ້ເປັນເຈົ້າ
ເນື່ອງຈາກພວກສັດຕູຂອງຂ້ານ້ອຍ
ຂໍນໍາຂ້ານ້ອຍໄປໂດຍຄວາມຊອບທໍາຂອງພຣະອົງ

ຂໍໂຜດເຮັດທາງຊື່ງຂ້ານ້ອຍຢ່າງນັ້ນໃຫ້ກົງໆດີ

9 ເພາະໃນປາກຂອງພວກເຂົາເຫລົ່ານັ້ນບໍ່ມີຄວາມສັດຊື່
ຈິດໃຈຂອງພວກເຂົາກໍຄືດ
ແຕ່ຄວາມຊົ່ວຮ້າຍຄໍຂອງພວກເຂົາຄືຂຸມຝັງສົບທີ່ເປີດຢູ່
ພວກເຂົາເວົ້າອໍເຊາະດ້ວຍລີ້ນຂອງຕົນ
10 ຂ້າແດ່ພຣະເຈົ້າ ໂຜດທຳລາຍພວກເຂົາ ແລະໃຫ້ພວກເຂົາທັງຫລາຍ
ລົ້ມລົງດ້ວຍຄວາມຄິດເຫັນຂອງຕົນເອງ
ເຫດການລະເມີດເປັນຈຳນວນຫລາຍນັ້ນ
ຂໍຂັບໄລ່ພວກເຂົາອອກໄປເນື່ອງຈາກພວກເຂົາທັງຫລາຍໄດ້ກະບົດຕໍ່ພຣະອົງ
11 ແຕ່ໃຫ້ຄົນທັງປວງທີ່ວາງໃຈໃນພຣະອົງນັ້ນຊົມຊື່ນຍິນດີ
ໃຫ້ພວກເຂົາຮ້ອງເພງດ້ວຍຄວາມຊື່ນຊົມຍິນດີຢູ່ສະເໝີ
ເພາະພຣະອົງປ້ອງກັນພວກເຂົາໄວ້
ໃຫ້ຄົນທີ່ຮັກພຣະນາມຂອງພຣະອົງຍິນດີຢູ່ໃນພຣະອົງ
12 ຂ້າແດ່ພຣະຜູ້ເປັນເຈົ້າ
ເພາະພຣະອົງຈະອຳນວຍພຣະພອນແກ່ຄົນຊອບທຳ
ພຣະອົງຈະຄຸ້ມຄອງພວກເຂົາໄວ້
ດ້ວຍຄວາມຍິນດີເໝືອນເປັນໂລ່ປ້ອງກັນພວກເຂົາ

# ບົດທີ 6

## ດາວິດຈົ່ມ ແຕ່ໄດ້ຊະນະພວກສັດຕູຂອງເພິ່ນ

*ເຖິງຫົວໜ້ານັກຮ້ອງ ໃຊ້ເຄື່ອງສາຍຕາມທຳນອງເຊມີນິດ ເພງສັນລະເສີນຂອງດາວິດ*

1 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຢ່າຕິຕຽນຂ້ານ້ອຍເມື່ອຮ້າຍ
ແລະຂໍຢ່າລົງໂທດຂ້ານ້ອຍດ້ວຍພຣະພິໂລດຂອງພຣະອົງ
2 ຂ້າແດ່ພຣະຜູ້ເປັນເຈົ້າ
ຂໍພຣະກະລຸນາແກ່ຂ້ານ້ອຍເພາະຂ້ານ້ອຍອ່ອນແອບໍ່ມີແຮງ
ຂ້າແດ່ພຣະຜູ້ເປັນເຈົ້າ
ຂໍຮັກສາຂ້ານ້ອຍ ເພາະກະດູກຂອງຂ້ານ້ອຍທຸກຍາກລຳບາກຫລາຍ
3 ທັງຈິດໃຈຂອງຂ້ານ້ອຍກໍທຸກຍາກລຳບາກຢ່າງໃຫຍ່ໂຕ
ຂ້າແດ່ພຣະຜູ້ເປັນເຈົ້າ ອີກດົນເທົ່າໃດຈະຊ່ວຍ

4 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຫັນມາຊ່ວຍຊີວິດຂອງຂ້ານ້ອຍໃຫ້ພົ້ນດ້ວຍເຖີດ
ຂໍຊ່ວຍຂ້ານ້ອຍໃຫ້ລອດພົ້ນເພາະເຫັນແກ່ຄວາມເມດຕາຂອງພຣະອົງ
5 ເພາະຖ້າໃນຄວາມຕາຍ ບໍ່ມີການລະນຶກເຖິງພຣະອົງ
ແລ້ວໃນຄວາມຕາຍໃຜນໍຈະໂມທະນາພຣະຄຸນຂອງພຣະອົງ

6 ຂ້ານ້ອຍອ່ອນເພຍດ້ວຍການຮ້ອງໄຫ້
ແລະຫລັ່ງນ້ຳຕາຈົນຖ້ວມຕຽງນອນຂອງຂ້ານ້ອຍຕະຫລອດທັງຄືນ
ບ່ອນທີ່ເນີ້ງຕົວລົງກໍປຽກຊຸ່ມໄປດ້ວຍນ້ຳຕາຂອງຂ້ານ້ອຍ
7 ຕາຂອງຂ້ານ້ອຍຊຸດໂຊມໄປ ເພາະຄວາມທຸກໃຈ
ມັນອ່ອນເພຍລົງ ເພາະຄູ່ແຂ່ງທັງປວງຂອງຂ້ານ້ອຍ

8 ບັນດາເຈົ້າຜູ້ກະທຳຄວາມຊົ່ວຊ້າຈົ່ງໜີໄປຈາກຂ້ານ້ອຍ
ເພາະພຣະຜູ້ເປັນເຈົ້າຮັບຟັງສຽງຮ້ອງໄຫ້ຂອງຂ້ານ້ອຍແລ້ວ
9 ພຣະຜູ້ເປັນເຈົ້າຮັບຟັງຄຳອ້ອນວອນຂອງຂ້າ
ພຣະອົງພຣະຜູ້ເປັນເຈົ້າຈະຮັບຄຳອະທິຖານຂອງຂ້ານ້ອຍ
10 ຂໍໃຫ້ສັດຕູທັງໝົດຂອງຂ້ານ້ອຍໄດຮັບຄວາມອັບອາຍ
ແລະລຳບາກຍາກເຂັນ
ຂໍໃຫ້ພວກເຂົາທັງຫລາຍຖອຍຫລັງກັບ
ແລະໄດ້ຮັບຄວາມອັບອາຍໃນພິບຕາດຽວ

# ບົດທີ 7

## ດາວິດອະທິຖານເລື່ອງຄວາມປະສົງຮ້າຍຂອງພວກສັດຕູ

*ບົດເພງຊິກກາຍໂຢນ ຂອງດາວິດ ຊຶ່ງເພິ່ນຮ້ອງຖວາຍພຣະຜູ້ເປັນເຈົ້າ
ກ່ຽວກັບຄຳເວົ້າຂອງຄົນເບັນຢາມິນ*

1 ໂອ ຂ້າແດ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງຂ້ານ້ອຍ
ຂ້ານ້ອຍວາງໃຈຢູ່ໃນພຣະອົງ
ຂໍຊ່ວຍຂ້ານ້ອຍໃຫ້ພົ້ນໄພ
ຈາກຜູ້ຂົ່ມເຫງທັງມວນ ຂໍຊ່ວຍຂ້ານ້ອຍໃຫ້ພົ້ນ
2 ຢ້ານວ່າພວກເຂົາຈະຈີກຈິດວິນຍານຂ້ານ້ອຍຢ່າງສິງໃຫຍ່
ແລະຈີກຈິດວິນຍານນັ້ນອອກເປັນຕ່ອນໆໂດຍບໍ່ມີຜູ້ໃດຊ່ວຍໄດ້

3 ຂ້າແດ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງຂ້ານ້ອຍ ຖ້າຂ້ານ້ອຍກະທຳເຊັ່ນນີ້
ຄືຖ້າມີຄວາມຊົ່ວຊ້າໃນມືຂອງຂ້ານ້ອຍ
4 ຖ້າຂ້ານ້ອຍຕອບແທນຄວາມຊົ່ວແກ່ຜູ້ທີ່ຢູ່ຢ່າງສັນຕິກັບຂ້ານ້ອຍ
(ແຕ່ຜູ້ທີ່ເປັນສັດຕູດ້ວຍປາດສະຈາກເຫດ
ຂ້ານ້ອຍເຄີຍຊ່ວຍຜູ້ນັ້ນໃຫ້ລອດພົ້ນໄປ)
5 ກໍຂໍໃຫ້ສັດຕູຂົ່ມເຫງຈິດວິນຍານຂ້ານ້ອຍທັນທີ
ແລະໃຫ້ພວກເຂົາຢຽບຊີວິດຂ້ານ້ອຍລົງເຖິງດິນ
ແລະວາງກຽດຕິຍົດຂອງຂ້ານ້ອຍໄວ້ໃນຂີ້ຝຸ່ນດິນ

*ເຊລາ*

6 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍພຣະອົງລຸກຂຶ້ນດ້ວຍພຣະພິໂລດຂອງພຣະອົງ
ຂໍຊົງຂຶ້ນສູ້ຄວາມຮ້າຍກາດຂອງສັດຕູຂອງຂ້ານ້ອຍ
ຂໍຕື່ນຂຶ້ນເພື່ອການພິພາກສາທີ່ພຣະອົງກຳນົດແລ້ວ
7 ດັ່ງນັ້ນ ປະຊາຊາດທັງຫລາຍຈະມາຢູ່ຮອບພຣະອົງ
ເພາະເຫັນແກ່ຊຸມນຸມນັ້ນ ຂໍກັບໄປປະທັບເທິງທີ່ສູງ
8 ພຣະຜູ້ເປັນເຈົ້າ ຈະພິພາກສາຊົນຊາດທັງຫລາຍ
ຂ້າແດ່ພຣະຜູ້ເປັນເຈົ້າ ຂໍພິພາກສາຂ້ານ້ອຍ
ຕາມຄວາມຊອບທຳຂອງຂ້ານ້ອຍ
ແລະຕາມຄວາມສັດຊື່ສຸດຈະລິດຊຶ່ງມີຢູ່ໃນຂ້ານ້ອຍ

9 ຂໍໃຫ້ຄວາມຊົ່ວຮ້າຍຂອງຄົນຊົ່ວຈົ່ງມາເຖິງທີ່ສິ້ນສຸດ
ແຕ່ຂໍສະຖາປະນາຄົນຊອບທຳຂຶ້ນ
ເພາະ ພຣະເຈົ້າ ຜູ້ຊອບທຳທົດລອງຄວາມຄິດ ແລະຈິດໃຈທັງຫລາຍ
10 ການປ້ອງກັນຂ້ານ້ອຍຢູ່ກັບ ພຣະເຈົ້າ
ຜູ້ຊ່ວຍຄົນໃຈທ່ຽງທຳໃຫ້ລອດພົ້ນ
11 ພຣະເຈົ້າ ພິພາກສາຄົນຊອບທຳ
ແລະ ພຣະເຈົ້າ ພຣະພິໂລດກັບຄົນຊົ່ວທຸກວັນ

12 ຖ້າມະນຸດຄົນໃດບໍ່ກັບໃຈ ພຣະອົງຈະລັບຄົມດາບຂອງພຣະອົງ
ພຣະອົງໂກ່ງທະນູຕຽມພ້ອມໄວ້
13 ພຣະອົງຕຽມອາວຸດແຫ່ງຄວາມຕາຍ
ພຣະອົງເຮັດໃຫ້ລູກທະນູຂອງພຣະອົງຕໍ່ສູ້ຜູ້ຂົ່ມເຫງທັງຫລາຍ

14 ເບິ່ງແມ ຄົນຊົ່ວກໍ່ຄວາມຊົ່ວຊ້າຂຶ້ນແລ້ວ ກຳລັງຖືພາຄວາມຊົ່ວຊ້າ
ແລະເກີດການຂີ້ຕົວະອອກມາ
15 ພວກເຂົາຂຸດຂຸມພາງໄວ້
ແລະຕົກລົງໄປໃນຂຸມທີ່ພວກເຂົາເຮັດໄວ້ນັ້ນ
16 ຄວາມຊົ່ວຊ້າຂອງພວກເຂົາຈະກັບມາສຸມຫົວພວກເຂົາ
ແລະຄວາມທາລຸນຂອງພວກເຂົາຈະລົງມາຫົວຂອງພວກເຂົາເອງ

17 ຂ້ານ້ອຍຈະສັນລະເສີນ ພຣະຜູ້ເປັນເຈົ້າ
ເນື່ອງດ້ວຍຄວາມຊອບທຳຂອງພຣະອົງ
ແລະຂ້ານ້ອຍຈະຮ້ອງເພງ
ສັນລະເສີນພຣະນາມຂອງ ພຣະຜູ້ເປັນເຈົ້າ ຜູ້ສູງສຸດ

# ບົດທີ 8

## ພຣະລັດສະໝີຂອງພຣະເຈົ້າ ແລະສັກສີຂອງມະນຸດ

1 ໂອພຣະຜູ້ເປັນເຈົ້າຂອງພວກຂ້ານ້ອຍທັງຫລາຍ
ຄວາມຍິ່ງໃຫຍ່ຂອງພຣະອົງເກີນວ່າລືຊາໄປທົ່ວທັງໂລກ!
ການສັນລະເສີນພຣະອົງດັ່ງກ້ອງຂຶ້ນສູ່ສະຫວັນ.
2 ຊຶ່ງເປັນເພງສັນລະເສີນຈາກເດັກນ້ອຍ ແລະເດັກອ່ອນ
ພຣະອົງໄດ້ສ້າງກຳແພງ
ເພື່ອຕໍ່ສູ້ກັ້ນກາງສັດຕູ ແລະຄູ່ແຂ່ງຂັນຂອງພຣະອົງ.

3 ເມື່ອຂ້ານ້ອຍຫລຽວເບິ່ງທ້ອງຟ້າທີ່ພຣະອົງຊົງສ້າງ
ແລະຫລຽວເບິ່ງເດືອນດາວທີ່ພຣະອົງຊົງຕັ້ງໄວ້.
4 ມະນຸດສຳຄັນຫຍັງພໍທີ່ພຣະອົງຈະຄິດເຖິງພວກເຂົາແລະດູແລຮັກສາພວກເຂົາ
ເປັນການປະຫລາດໃຈແທ້.
5 ແຕ່ພຣະອົງຍັງແຕ່ງຕັ້ງໃຫ້ພວກເຂົາມີຖານະຮອງຈາກພຣະອົງລົງມາ
ພຣະອົງຊົງໃຫ້ມະນຸດມີສະຫງ່າລາສີ ແລະໄດ້ຮັບກຽດຕິຍົດ.
6 ພຣະອົງຊົງແຕ່ງຕັ້ງໃຫ້ມະນຸດຄຸ້ມຄອງເໜືອທຸກສິ່ງທີ່ພຣະອົງຊົງສ້າງໄວ້.
7 ເໜືອຝູງແກະ ຝູງງົວຄວາຍ ແລະສັດປ່າ.
8 ທັງນົກໜູໃນອາກາດ
ຕະຫລອດທັງທຸກໆສິ່ງທີ່ສ້າງຂຶ້ນໃນທ້ອງທະເລ.

9 ຂ້າແດ່ພຣະຜູ້ເປັນເຈົ້າຂອງພວກຂ້ານ້ອຍ
ຄວາມຍິ່ງໃຫຍ່ຂອງພຣະອົງຊົງປະກົດກະຈາຍຢູ່ທົ່ວແຜ່ນດິນໂລກ.

# ບົດທີ 9

## ການສັນລະເສີນພຣະເຈົ້າເນື່ອງດ້ວຍການພິພາກສາຂອງພຣະອົງ

*ເຖິງຫົວໜ້ານັກຮ້ອງຕາມທຳນອງມູດລາບເບັນ ເພງສັນລະເສີນຂອງດາວິດ*

1 ຂ້າແດ່ພຣະຜູ້ເປັນເຈົ້າຂ້ານ້ອຍຈະສັນລະເສີນພຣະອົງ
ດ້ວຍສິ້ນສຸດໃຈຂອງຂ້ານ້ອຍ
ຂ້ານ້ອຍຈະບອກເຖິງການມະຫັດສະຈັນທັງໝົດຂອງພຣະອົງ
2 ຂ້ານ້ອຍຈະຍິນດີ ແລະຊື່ນໃຈໃນພຣະອົງ ຂ້າແດ່ອົງຜູ້ສູງສຸດ
ຂ້ານ້ອຍຈະຮ້ອງເພງສັນລະເສີນພຣະນາມຂອງພຣະອົງ

3 ເມື່ອພວກສັດຕູຂອງຂ້ານ້ອຍຖອຍຫລັງກັບ
ພວກເຂົາທັງຫລາຍກໍສະດຸດ ແລະຈິບຫາຍໄປຕໍ່ເບື້ອງພຣະພັກຂອງພຣະອົງ
4 ເພາະພຣະອົງໃຫ້ຄວາມຍຸດຕິທຳ ແລະຄວາມທ່ຽງທຳແກ່ຂ້ານ້ອຍ

ພຣະອົງປະທັບເທິງພຣະທີ່ນັ່ງ ແລະປະທານການພິພາກສາອັນຊອບທຳ
5 ພຣະອົງໄດ້ຊົງຕິຕຽນບັນດາປະຊາຊາດ ແລະທຳລາຍຄົນຊົ່ວ
ແລ້ວລຶບຊື່ຂອງພວກເຂົາອອກເປັນນິດ
6 ໂອ ສັດຕູເອີຍ ຄວາມຈິບຫາຍຂອງເຈົ້າໄດ້ສຳເລັດເປັນນິດ
ພຣະອົງທຳລາຍບັນດາຫົວເມືອງຂອງພວກເຂົາ
ແລະທີ່ລະນຶກຂອງພວກເຂົາກໍຈິບຫາຍພ້ອມກັບພວກເຂົາ

7 ແຕ່ພຣະຜູ້ເປັນເຈົ້າຈະຍືນຍົງຢູ່ເປັນນິດ
ພຣະອົງກະກຽມບັນລັງຂອງພຣະອົງເພື່ອການພິພາກສາ
8 ພຣະອົງຈະພິພາກສາໂລກດ້ວຍຄວາມຊອບທຳ
ພຣະອົງຈະພິພາກສາບັນດາປະຊາຊາດດ້ວຍຄວາມທ່ຽງທຳ
9 ພຣະຜູ້ເປັນເຈົ້າຈະເປັນທີ່ກຳບັງອັນເຂັ້ມແຂງຂອງຄົນທີ່ຖືກກົດຂີ່
ເປັນທີ່ກຳບັງອັນເຂັ້ມແຂງໃນເວລາຍາກລຳບາກ
10 ບັນດາຜູ້ທີ່ຮູ້ຈັກພຣະນາມຂອງພຣະອົງກໍຈະວາງໃຈໃນພຣະອົງ
ຂ້າແດ່ພຣະຜູ້ເປັນເຈົ້າ
ເພາະວ່າພຣະອົງບໍ່ໄດ້ປະຖິ້ມບັນດາຜູ້ທີ່ຊອກສະແຫວງຫາພຣະອົງ

11 ຈົ່ງຮ້ອງເພງສັນລະເສີນພຣະຜູ້ເປັນເຈົ້າຜູ້ຊົງປະທັບໃນຊີໂອນ
ຈົ່ງບອກເຖິງພຣະລາຊະກິດຂອງພຣະອົງໃນທ່າມກາງຊົນຊາດທັງຫລາຍ
12 ເມື່ອພຣະອົງໄຕ່ສວນເລື່ອງເລືອດ ພຣະອົງຈື່ພວກເຂົາທັງຫລາຍໄວ້
ພຣະອົງບໍ່ໄດ້ລືມຄຳຮ້ອງທຸກຂອງຜູ້ຖ່ອມຕົວລົງ

13 ຂ້າແດ່ພຣະຜູ້ເປັນເຈົ້າຂໍພຣະກະລຸນາແກ່ຂ້ານ້ອຍ
ຂໍທອດພຣະເນດວ່າຂ້ານ້ອຍຕ້ອງທົນທຸກທໍລະມານ
ເພາະຄົນທີ່ກຽດຊັງຂ້ານ້ອຍພຽງໃດ
ຂ້າແດ່ພຣະອົງ ຜູ້ຍົກຂ້ານ້ອຍຂຶ້ນຈາກປະຕູຂອງຄວາມຕາຍ
14 ເພື່ອຂ້ານ້ອຍຈະກ່າວບັນດາຄຳສັນລະເສີນພຣະອົງ
ໃນປະຕູທັງຫລາຍແຫ່ງທິດາຊີໂອນ
ຂ້ານ້ອຍຈະຊົມຊື່ນຍິນດີໃນການຊ່ວຍໃຫ້ລອດພົ້ນຂອງພຣະອົງ

15 ບັນດາປະຊາຊາດໄດ້ຈົມລົງໃນຂຸມ ຊຶ່ງພວກເຂົາເຮັດໄວ້
ແລະຕີນຂອງພວກເຂົາຕິດຕາໜ່າງ ຊຶ່ງພວກເຂົາເອງເຊື່ອງດັກໄວ້
16 ພຣະຜູ້ເປັນເຈົ້າເຜີຍພຣະອົງໃຫ້ປາກົດແຈ້ງ
ດ້ວຍການພິພາກສາຊຶ່ງພຣະອົງໄດ້ກະທຳ
ຄົນຊົ່ວຖືກດັກໂດຍກົດຈະການທີ່ເຮັດດ້ວຍມືຂອງພວກເຂົາເອງ.

*ຮິກກາໂຢນ ເສລາ*

17 ຄົນຊົ່ວຈະຕ້ອງຖອຍໄປສູ່ນາລົກ ຄືປະຊາຊາດທັງມວນທີ່ລືມພຣະເຈົ້າ
18 ເພາະພຣະອົງຈະບໍ່ລືມຄົນຂັດສົນສະເໝີໄປ
ແລະຄວາມຫວັງຂອງຄົນຍາກຈົນຈະບໍ່ຖືກທຳລາຍໄປເປັນນິດ

19 ຂ້າແດ່ພຣະຜູ້ເປັນເຈົ້າຂໍລຸກຂຶ້ນ ຢ່າໃຫ້ມະນຸດມີໄຊໄດ້
ແຕ່ໃຫ້ບັນດາປະຊາຊາດຖືກພິພາກສາ
ໃນສາຍພຣະເນດຂອງພຣະອົງທັງໝົດ
20 ຂ້າແດ່ພຣະຜູ້ເປັນເຈົ້າຂໍໃຫ້ພວກເຂົາຢຳເກງ
ແລະໃຫ້ບັນດາປະຊາຊາດຮູ້ວ່າພວກເຂົາທັງຫລາຍເປັນພຽງມະນຸດເທົ່ານັ້ນ

*ເຊລາ*

# ບົດທີ 10

## ດາວິດຮ້ອງທຸກຕໍ່ພຣະເຈົ້າ

1 ຂ້າແດ່ພຣະຜູ້ເປັນເຈົ້າ ເຫດໃດພຣະອົງປະທັບຢືນຢູ່ຫ່າງໄກ
ເຫດໃດພຣະອົງເຊື່ອງພຣະອົງໃນຍາມຍາກລຳບາກ
2 ຄົນຊົ່ວຂົ່ມເຫງຄົນຍາກຈົນຢ່າງທະນົງອົງອາດ
ຂໍໃຫ້ພວກເຂົາຕິດກັບບ້ວງແຮ້ວແຫ່ງອຸບາຍທີ່ພວກເຂົາຄິດຂຶ້ນນັ້ນ

3 ເພາະຄົນຊົ່ວອວດເຖິງສິ່ງທີ່ໃຈຕົນຢາກໄດ້
ແລະອວຍພອນຄົນທີ່ໂລບ ຜູ້ຊຶ່ງພຣະຜູ້ເປັນເຈົ້າກຽດຊັງ
4 ເພາະຄົນຊົ່ວນັ້ນ ດ້ວຍເຫດຂອງຄວາມທະນົງຕົວຈະບໍ່ສະແຫວງຫາພຣະເຈົ້າ
ພຣະເຈົ້າບໍ່ໄດ້ຢູ່ໃນຄວາມຄິດທັງໝົດຂອງລາວເລີຍ
5 ວິທີການຂອງຄົນຊົ່ວຮ້າຍມີຢູ່ທຸກເວລາ ການພິພາກສາຂອງພຣະອົງ
ຢູ່ສູງພົ້ນສາຍຕາຂອງພວກເຂົາ ພວກເຂົາພົ່ນຄວາມຮ້າຍໃສ່ບັນດາຄູ່ແຂ່ງຂອງຕົນ
6 ໂດຍຄິດໃນໃຈວ່າ “ຂ້ອຍຈະບໍ່ຫວັ່ນໄຫວ
ເພາະຂ້ອຍຈະບໍ່ພົບຄວາມຍາກລຳບາກເລີຍ”
7 ການສາບແຊ່ງ ການຫລອກລວງ ແລະການສໍ້ໂກງຢູ່ເຕັມປາກຂອງພວກເຂົາ
ຄວາມຊົ່ວຮ້າຍ ແລະຄວາມຊົ່ວຊ້າຢູ່ກ້ອງລີ້ນຂອງພວກເຂົາ
8 ພວກເຂົານັ່ງລີ້ຄອຍຖ້າເຮັດຮ້າຍຢູ່ຕາມຊົນນະບົດ
ແລະຂ້າຄົນບໍ່ມີຄວາມຜິດໃນທີ່ລັບລີ້ ຕາຂອງພວກເຂົາຊອກຫາຄົນຍາກຈົນ
9 ພວກເຂົາລີ້ຢູ່ໃນທີ່ລັບລີ້ເໝືອນສິງໂຕໃຫຍ່ຢູ່ໃນທີ່ກຳບັງ
ພວກເຂົາລີ້ຢູ່ເພື່ອຈັບຄົນຍາກຈົນ
ແລ້ວພວກເຂົາດຶງລາກຄົນຍາກຈົນມາດ້ວຍຕາໜ່າງຂອງພວກເຂົາເອງ
10 ພວກເຂົາຖືກຢຽບຢໍ່າລົງ ແລະຖືກເຍາະເຍີ້ຍ
ເພື່ອຄົນຍາກຈົນຈະຈົມລົງດ້ວຍພວກທີ່ແຂງແຮງ

11 ພວກເຂົາຄິດໃນໃຈວ່າ "ພຣະເຈົ້າລືມແລ້ວ
ພຣະອົງເຊື່ອງພຣະພັກ ແລະຈະບໍ່ເຫັນເລີຍ"

12 ຂ້າແດ່ພຣະຜູ້ເປັນເຈົ້າຂໍລຸກຂຶ້ນ ຂ້າແດ່ພຣະເຈົ້າ
ຂໍຍົກພຣະຫັດຂອງພຣະອົງຂຶ້ນ ຂໍຢ່າລືມຄົນທີ່ຖ່ອມຕົວລົງ
13 ເຫດໃດຄົນຊົ່ວຈຶ່ງປະມາມພຣະເຈົ້າ ແລະກ່າວໃນໃຈຂອງຕົນເອງວ່າ
"ພຣະອົງຈະບໍ່ເອົາເລື່ອງເອົາລາວ"
14 ພຣະອົງເຫັນ ເອີ ພຣະອົງພິຈາລະນາຄວາມຍາກລຳບາກ
ແລະຄວາມຄຽດແລ້ວ ເພື່ອພຣະອົງຈະໄດ້ດຳເນີນຄະດີ
ດ້ວຍພຣະຫັດຂອງພຣະອົງ
ຄົນຍາກຈົນມອບຕົວໄວ້ກັບພຣະອົງ ພຣະອົງເປັນຜູ້ຊ່ວຍຄົນກຳພ້າພໍ່
15 ຂໍພຣະອົງຫັກແຂນຂອງຄົນຊົ່ວ ແລະຄົນກະທຳຊົ່ວ
ຂໍຄົ້ນຄວາມຊົ່ວຂອງພວກເຂົາອອກມາຈົນໝົດ

16 ພຣະຜູ້ເປັນເຈົ້າເປັນພຣະມະຫາກະສັດຢູ່ເປັນນິດນິລັນດອນ
ບັນດາປະຊາຊາດຈະຈິບຫາຍໄປຈາກແຜ່ນດິນຂອງພຣະອົງ
17 ຂ້າແດ່ພຣະຜູ້ເປັນເຈົ້າພຣະອົງຮັບຟັງຄວາມປາດຖະໜາ
ຂອງຄົນທີ່ຖ່ອມຕົວລົງ ຈະເສີມກຳລັງໃຈພວກເຂົາ
ແລະພຣະອົງຈະຫງ່ຽງພຣະກັນຮັບຟັງຖ້ອຍຄຳຂອງພວກເຂົາ
18 ເພື່ອປະທານຄວາມຍຸດຕິທຳແກ່ຄົນກຳພ້າພໍ່ ແລະຄົນຖືກບີບບັງຄັບ
ເພື່ອມະນຸດເທິງແຜ່ນດິນໂລກຈະບໍ່ບີບບັງຄັບພວກເຂົາອີກຕໍ່ໄປ

# ບົດທີ 11

## ການຈັດຕຽມ ແລະຄວາມຍຸດຕິທຳຂອງພຣະເຈົ້າ

*ເຖິງຫົວໜ້ານັກຮ້ອງ ເພງສັນລະເສີນຂອງດາວິດ*

1 ຂ້ອຍວາງໃຈໃນພຣະຜູ້ເປັນເຈົ້າ
ເຈົ້າຈະເວົ້າກັບຈິດໃຈຂ້ອຍຢ່າງໃດວ່າ
"ຈົ່ງໜີໄປທີ່ພູເຂົາເໝືອນນົກ
2 ເພາະເບິ່ງແມ ຄົນຊົ່ວກົ່ງທະນູ ແລະເອົາລູກທະນູພາດສາຍໄວ້ແລ້ວ
ເພື່ອຈະຍິງເຂົ້າໄປໃນທີ່ມືດໃຫ້ຖືກຄົນທີ່ມີໃຈທ່ຽງທຳ
3 ຖ້າຮາກຖານຖືກທຳລາຍແລ້ວ ຄົນຊອບທຳຈະເຮັດຫຍັງໄດ້"

4 ພຣະຜູ້ເປັນເຈົ້າສະຖິດໃນພຣະວິຫານອັນບໍລິສຸດຂອງພຣະອົງ
ພຣະທີ່ນັ່ງຂອງພຣະຜູ້ເປັນເຈົ້າຢູ່ເທິງຟ້າສະຫວັນ
ພຣະເນດຂອງພຣະອົງເຝົ້າເບິ່ງ

ແລະຕາຂອງພຣະອົງທົດສອບບຸດທັງຫລາຍຂອງມະນຸດ
5 ພຣະຜູ້ເປັນເຈົ້າທົດສອບຄົນຊອບທຳ ແຕ່ວິນຍານຂອງພຣະອົງກຽດຊັງຄົນຊົ່ວ
ແລະຜູ້ທີ່ຮັກຄວາມທາລຸນໂຫດຮ້າຍ
6 ພຣະອົງຈະຖອກບ້ວງແຮ້ວຕ່າງໆ ແປວໄຟ ແລະມາດໃສ່ຄົນຊົ່ວ
ລົມທີ່ແຜດເຜົາຈະເປັນສ່ວນຖ້ວຍຂອງພວກເຂົາເຫລົ່ານັ້ນ
7 ເພາະພຣະຜູ້ເປັນເຈົ້າຜູ້ຊອບທຳຈຶ່ງຮັກຄວາມຊອບທຳ
ພຣະພັກຂອງພຣະອົງທອດພຣະເນດຄົນທ່ຽງທຳ

# ບົດທີ 12

## ດາວິດໝັ້ນໃຈໃນພຣະສັນຍາຂອງພຣະເຈົ້າ

*ເຖິງຫົວໜ້ານັກຮ້ອງຕາມທຳນອງເຊມິນິດ ເພງສັນລະເສີນຂອງດາວິດ*

1 ຂ້າແດ່ພຣະຜູ້ເປັນເຈົ້າຂໍໂຜດຊ່ວຍເພາະຄົນທີ່ຕາມທາງຂອງພຣະເຈົ້າ
ບໍ່ມີອີກແລ້ວ
ແລະຄົນສຸດຈະລິດໄດ້ສູນຫາຍໄປຈາກບຸດທັງຫລາຍຂອງມະນຸດ
2 ທຸກຄົນກ່າວຄຳບໍ່ມີປະໂຫຍດຕໍ່ເພື່ອນບ້ານຂອງຕົນ
ພວກເຂົາທັງຫລາຍເວົ້າດ້ວຍຮີມປາກທີ່ຖະແຫລງແປງຄຳ ແລະສອງໃຈ
3 ພຣະຜູ້ເປັນເຈົ້າຈະຕັດຮີມປາກທີ່ອວດອ້າງອອກ
ແລະລີ້ນທີ່ອວດອ້າງການໃຫຍ່ນັ້ນດ້ວຍ
4 ຄືບັນດາຜູ້ທີ່ກ່າວວ່າ "ເຮົາຈະຊະນະດ້ວຍລີ້ນຂອງເຮົາ
ຮີມປາກຂອງເຮົາເປັນຝ່າຍເຮົາ ໃຜຈະເປັນນາຍເຮົາ"

5 ພຣະຜູ້ເປັນເຈົ້າກ່າວວ່າ "ເຮົາຈະລຸກຂຶ້ນດຽວນີ້
ເພາະຄົນຍາກຈົນຖືກບີບບັງຄັບ ແລະຄົນຂັດສົນຮ້ອງໄຫ້
ເຮົາຈະຈັດພວກເຂົາໄວ້ໃນທີ່ປອດໄພຫ່າງໄກຈາກຄົນທີ່ພົ່ນຄວາມຮ້າຍໃສ່ພວກເຂົາ"

6 ພຣະດຳລັດຂອງພຣະຜູ້ເປັນເຈົ້າເປັນພຣະດຳລັດທີ່ບໍລິສຸດ
ເປັນເໝືອນເງິນຫລອມໃຫ້ບໍລິສຸດ
ໃນເຕົາໄຟເທິງແຜ່ນດິນແລ້ວເຖິງເຈັດເທື່ອ

7 ຂ້າແດ່ພຣະຜູ້ເປັນເຈົ້າພຣະອົງຈະປ້ອງກັນພວກເຂົາທັງຫລາຍ
ພຣະອົງຈະປົກປັກຮັກສາພວກເຂົາໄວ້ສະເໝີຈາກພົງພັນນີ້
8 ຄົນຊົ່ວກໍທ່ຽວໄປມາຢູ່ຮອບດ້ານ
ຂະນະເມື່ອມີການຍົກຍ້ອງຄົນຊົ່ວຊ້າທີ່ສຸດ

# ບົດທີ 13

## ການອ້ອນວອນຂໍຄວາມຊ່ອຍເຫລືອ

1 ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງຈະລືມຂ້ານ້ອຍໄປດົນປານໃດ?
ຈົນຕະຫລອດໄປບໍ?
ພຣະອົງຈະລີ້ຂ້ານ້ອຍດົນປານໃດ?
2 ຂ້ານ້ອຍຈະຕ້ອງທົນທຸກທໍລະມານດົນປານໃດ?
ຂ້ານ້ອຍຈະໂສກເສົ້າເສຍໃຈທັງວັນ ແລະຄືນດົນເທົ່າໃດ?
ສັດຕູຈະຊະນະຂ້ານ້ອຍໄປດົນປານໃດ?

3 ຂ້າແດ່ພຣະຜູ້ເປັນເຈົ້າ ຂອງຂ້ານ້ອຍ
ຂໍຊົງຫລຽວເບິ່ງຂ້ານ້ອຍ ແລະຕອບຂ້ານ້ອຍດ້ວຍ
ຈົ່ງຊ່ອຍໃຫ້ຂ້ານ້ອຍມີແຮງຂຶ້ນ ເພື່ອວ່າຂ້ານ້ອຍຈະບໍ່ຕາຍ.
4 ແລ້ວສັດຕູຂອງຂ້ານ້ອຍຈະບໍ່ສາມາດເວົ້າໄດ້ວ່າ,
“ພວກເຮົາໄດ້ຊະນະລາວແລ້ວ”
ພວກເຂົາຈະບໍ່ໄດ້ຍິນການຫລົ້ມຈົມຂອງຂ້ານ້ອຍ.

5 ແຕ່ວ່າຂ້ານ້ອຍໄວ້ໃຈໃນຄວາມຮັກອັນໝັ້ນຄົງຂອງພຣະອົງ
ຂ້ານ້ອຍດີໃຈ ເພາະພຣະອົງຈະຊ່ອຍຂ້ານ້ອຍໃຫ້ພົ້ນໄພ.
6 ຂ້ານ້ອຍຈະຮ້ອງເພງສັນລະເສີນ ພຣະຜູ້ເປັນເຈົ້າ
ເພາະພຣະອົງຊົງດີຕໍ່ຂ້ານ້ອຍ.

# ບົດທີ 14

## ຄວາມຊົ່ວຊ້າຂອງມະນຸດ

1 ຄົນໂງ່ຄິດໃນໃຈຕົນເອງວ່າ, “ພຣະເຈົ້າບໍ່ສຳຄັນ”
ພວກເຂົາທຸກໆ ຄົນເປັນຄົນອະທຳ
ພວກເຂົາໄດ້ເຮັດໃນສິ່ງທີ່ໜ້າຢ້ານຕົກໃຈ
ໂດຍບໍ່ມີໃຜປະພຶດຕົນໃນທາງທີ່ຖືກຕ້ອງ.
2 ພຣະຜູ້ເປັນເຈົ້າ ຊົງທອດພຣະເນດເບິ່ງມວນມະນຸດຈາກສະຫວັນ
ເພື່ອຢາກຮູ້ວ່າມີໃຜທີ່ເປັນຄົນສະຫລາດຂາບໄຫວ້ພຣະອົງ.
3 ແຕ່ວ່າພວກເຂົາທຸກຄົນເຮັດໃນທາງຜິດ ແລະເປັນຄົນຊົ່ວ
ໃນພວກເຂົາບໍ່ມີຜູ້ໃດເຮັດໃນສິ່ງຖືກຕ້ອງ ແມ່ນແຕ່ຜູ້ດຽວກໍບໍ່ມີ.

4 ພຣະຜູ້ເປັນເຈົ້າ ຊົງຖາມວ່າ, “ພວກເຂົາບໍ່ມີປັນຍາບໍ?
ແມ່ນຄົນໂງ່ບໍທີ່ເຮັດຊົ່ວແບບນີ້?
ພວກເຂົາມີຊີວິດຢູ່ໄດ້ດ້ວຍການປຸ້ນຈີ້ໄພ່ພົນຂອງເຮົາ

ແລະບໍ່ໄດ້ອ້ອນວອນຫາເຮົາເລີຍ.”

5 ແຕ່ວ່າພວກເຂົາຈະເປັນຄົນຂີ້ຢ້ານ
ເພາະ ພຣະເຈົ້າ ຊົງສະຖິດຢູ່ກັບຜູ້ຊອບທຳ.
6 ພວກເຂົາໝາຍຈະລົ້ມແຜນການຂອງພວກອານາຖາ
ເພາະວ່າພວກນີ້ເພິ່ງອາໄສ ພຣະຜູ້ເປັນເຈົ້າ.

7 ຂໍໃຫ້ພວກ ອິສຣາເອນ ໄດ້ຮັບຄວາມພົ້ນມາຈາກເມືອງ ຊີໂອນ
ເມື່ອໃດ ພຣະຜູ້ເປັນເຈົ້າ ຊົງ ໃຫ້ໄພ່ພົນຂອງພຣະອົງຈະເລີນຂຶ້ນອີກ
ເມື່ອນັ້ນເຊື້ອສາຍຂອງ ຢາໂຄບ ຈະມີຄວາມສຸກ
ແລະພວກ ອິສຣາເອນ ຈະຍິນດີ.

# ບົດທີ 15

## ສິ່ງທີ່ພຣະເຈົ້າຊົງຕ້ອງການ

1 ຂ້າແດ່ ພຣະຜູ້ເປັນເຈົ້າ ໃຜອາດຈະຢູ່ໃນວິຫານຂອງພຣະອົງໄດ້
ຜູ້ໃດຈະຢູ່ໃນ ຊີໂອນ ພູສັກສິດຂອງພຣະອົງໄດ້.

2 ຄົນທີ່ເຊື່ອຟັງຄວາມຂອງ ພຣະເຈົ້າ
ເຮັດໃນສິ່ງທີ່ຖືກຕ້ອງສະເໝີໄປ
ຄືມີຄວາມເວົ້າອັນສັດຊື່ ແລະແນ່ແທ້.
3 ແລະຜູ້ທີ່ບໍ່ປະໝາດຄົນອື່ນ
ລາວບໍ່ເຮັດຜິດຕໍ່ໝູ່ຄູ່
ແລະບໍ່ກ່າວຂວັນນິນທາເພື່ອນບ້ານ.
4 ລາວກຽດຊັງຄົນຊົ່ວທີ່ ພຣະເຈົ້າ ປະຖິ້ມ
ແຕ່ລາວໃຫ້ກຽດຜູ້ເຊື່ອຟັງພຣະອົງ
ລາວເຮັດຕາມຄຳສັນຍາຂອງຕົນເອງສະເໝີ
ເຖິງແມ່ນລາວຈະເສຍຜົນປະໂຫຍດຫລາຍປານໃດກໍຕາມ
ລາວກໍບໍ່ຍອມປີ້ນຄວາມ.
5 ລາວໃຫ້ຄົນຢືມເງິນໂດຍບໍ່ຄິດດອກເບ້ຍ
ແລະບໍ່ຮັບເອົາສິນບົນເພື່ອຕໍ່ສູ້ຄົນທີ່ບໍ່ມີຄວາມຜິດ
ຜູ້ກະທຳສິ່ງເຫລົ່ານີ້ຈະບໍ່ຫລົງເສຍໄປຈັກເທື່ອ.

# ບົດທີ 16

## ການອ້ອນວອນຂອງຜູ້ທີ່ມີຄວາມໝັ້ນໃຈ

1 ຂ້າແດ່ ພຣະຜູ້ເປັນເຈົ້າ ຂໍໂຜດຄຸ້ມຄອງຂ້ານ້ອຍ

ເພາະວ່າຂ້ານ້ອຍມາເພິ່ງພຣະອົງເພື່ອຄວາມປອດໄພ.
2 ຂ້ານ້ອຍທູນຕໍ່ພຣະອົງວ່າ, "ພຣະອົງແມ່ນພຣະຜູ້ເປັນເຈົ້າຂອງຂ້ານ້ອຍ
ທຸກສິ່ງທີ່ດີແມ່ນຂອງພຣະອົງຊົງປະທານໃຫ້."
3 ພວກທີ່ເຊື່ອພຣະຜູ້ເປັນເຈົ້າເປັນຄົນປະເສີດທີ່ສຸດ
ຂ້ານ້ອຍມີຄວາມດີໃຈຢ່າງໃຫຍ່ຕໍ່ພວກເຂົາ.
4 ແຕ່ພວກທີ່ຕິດຕາມພະອື່ນ
ກໍຮັບເອົາຄວາມລຳບາກເຂົ້າໃສ່ຕົວເອງ
ຂ້ານ້ອຍຈະບໍ່ຮ່ວມໃນການບູຊາຂອງພວກເຂົາ
ຂ້ານ້ອຍຈະບໍ່ນະມັດສະການພະທັງຫລາຍຂອງພວກເຂົາ.

5 ຂ້າແດ່ພຣະຜູ້ເປັນເຈົ້າພຣະອົງຊົງເປັນທຸກສິ່ງທີ່ຂ້ານ້ອຍມີ
ແລະພຣະອົງຊົງປະທານທຸກສິ່ງທີ່ຂ້ານ້ອຍຕ້ອງການ
ຊີວິດຂ້ານ້ອຍຢູ່ໃນເງື້ອມພຣະຫັດຂອງພຣະອົງ.
6 ຂອງປະທານທີ່ພຣະອົງຊົງໂຜດແກ່ຂ້ານ້ອຍກໍອັດສະຈັນຫລາຍ
ຂອງປະທານນັ້ນເປັນສິ່ງທີ່ດີທີ່ສຸດ.

7 ຂ້ານ້ອຍສັນລະເສີນພຣະຜູ້ເປັນເຈົ້າເພາະພຣະອົງຊົງນຳໜ້າຂ້ານ້ອຍ
ໃນກາງຄືນຈິດສຳນຶກກໍເຕືອນຂ້ານ້ອຍ.
8 ຂ້ານ້ອຍຮູ້ສຶກໃນໃຈສະເໝີວ່າພຣະຜູ້ເປັນເຈົ້າຊົງສະຖິດຢູ່ນຳ
ແລະບໍ່ມີສິ່ງໃດເຮັດໃຫ້ຂ້ານ້ອຍຕົກສະທ້ານຢ້ານກົວ
ເພາະພຣະອົງຊົງສະຖິດຢູ່ໃກ້ຂ້ານ້ອຍ.
9 ດັ່ງນັ້ນ ຂ້ານ້ອຍຈຶ່ງເຕັມໄປດ້ວຍຄວາມສຸກ ແລະຄວາມມ່ວນຊື່ນ
ພ້ອມທັງມີຄວາມຮູ້ສຶກສະບາຍໃຈຢູ່ເລື້ອຍໆ.
10 ເພາະພຣະອົງຈະບໍ່ຊົງນຳຂ້ານ້ອຍເຂົ້າໄປສູ່ແດນຄົນຕາຍ
ພຣະອົງຈະບໍ່ປະປ່ອຍໃຫ້ຜູ້ທີ່ພຣະອົງຮັກເຂົ້າໄປໃນບ່ອນເລິກລັບນັ້ນ.
11 ພຣະອົງຊົງຊີ້ໃຫ້ຂ້ານ້ອຍເຫັນຫົນທາງຊຶ່ງນຳໄປສູ່ຊີວິດ
ພຣະພັກຂອງພຣະອົງເຮັດໃຫ້ຂ້ານ້ອຍເຕັມໄປດ້ວຍຄວາມມ່ວນຊື່ນ
ແລະຄວາມຊົດຊ່ອຍຂອງພຣະອົງກໍນຳຄວາມຍິນດີມາໃຫ້ຕະຫລອດໄປ.

# ບົດທີ 17

## ດາວິດຂໍພຣະເຈົ້າປ້ອງກັນເພິ່ນຈາກພວກສັດຕູ

*ຄຳອະທິຖານຂອງດາວິດ*

1 ຂ້າແດ່ພຣະຜູ້ເປັນເຈົ້າຂໍຮັບຟັງຄວາມຝ່າຍຍຸດຕິທຳ
ຟັງຄຳຮ້ອງທູນຂອງຂ້ານ້ອຍ ຂໍຫງ່ຽງພຣະກັນຮັບຟັງ
ຄຳອະທິຖານຂອງຂ້ານ້ອຍ

ຊຶ່ງມາຈາກຮີມປາກທີ່ບໍ່ມີການຫລອກລວງຂອງຂ້ານ້ອຍ
2 ຂໍໃຫ້ການຊະນະຄວາມຂອງຂ້ານ້ອຍມາຈາກພຣະພັກພຣະອົງ
ຂໍພຣະເນດຂອງພຣະອົງເຫັນສິ່ງທ່ຽງທຳ
3 ເມື່ອພຣະອົງລອງຈິດໃຈຂອງຂ້ານ້ອຍ
ແລະສະເດັດຢ້ຽມຢາມຂ້ານ້ອຍໃນເວລາກາງຄືນ
ເມື່ອທົດສອບຂ້ານ້ອຍແລ້ວ ພຣະອົງຈະບໍ່ພົບຄວາມຊົ່ວໃນຂ້ານ້ອຍເລີຍ
ຂ້ານ້ອຍຕັ້ງໃຈແລ້ວວ່າປາກຂອງຂ້ານ້ອຍຈະບໍ່ໄດ້ລະເມີດ
4 ກ່ຽວດ້ວຍກິດຈະການຂອງມະນຸດ ໂດຍພຣະທຳຈາກພຣະໂອດຂອງພຣະອົງ
ຂ້ານ້ອຍບໍ່ໄດ້ຂ້ອງກ່ຽວກັບທາງແຫ່ງຄົນທາລຸນໂຫດຮ້າຍ
5 ຂໍໃຫ້ທາງເດີນຂອງຂ້ານ້ອຍແນບສະນິດກັບການດຳເນີນຊີວິດຂອງພຣະອົງ
ເພື່ອຕີນຂອງຂ້ານ້ອຍຈະບໍ່ໄດ້ພາດ

6 ຂ້າແດ່ພຣະເຈົ້າ ຂ້ານ້ອຍຮ້ອງທູນເຖິງພຣະອົງ
ເພາະພຣະອົງຈະຮັບຟັງຂ້ານ້ອຍ
ຂໍອຽງພຣະກັນຮັບຟັງຖ້ອຍຄຳຂອງຂ້ານ້ອຍດ້ວຍເຖີດ
7 ຂ້າແດ່ພຣະຜູ້ຊ່ອຍ ຂອງບັນດາຜູ້ສະແຫວງຫາບ່ອນລີ້ໄພຈາກພວກສັດຕູ
ຂອງພວກເຂົາໃນພຣະຫັດຂວາຂອງພຣະອົງ
ຂໍສະແດງຄວາມເມດຕາຢ່າງມະຫັດສະຈັນຂອງພຣະອົງ
8 ຂໍຮັກສາຂ້ານ້ອຍດັ່ງແກ້ວຕາ
ຂໍເຊື່ອງຂ້ານ້ອຍໄວ້ພາຍໃຕ້ລຸ່ມປີກຂອງພຣະອົງ
9 ໃຫ້ພົ້ນຈາກຄົນຊົ່ວຜູ້ລ້າງຜານ ແລະຈາກສັດຕູຜູ້ຄອຍຖ້າເຂັ່ນຂ້າ
ຊຶ່ງອ້ອມຂ້ານ້ອຍໄວ້ໂດຍຮອບ

10 ພວກເຂົາປິດໃຈຂອງຕົນໄວ້ ເພາະເຫດຄວາມຮັ່ງມີຂອງຕົນ
ປາກຂອງພວກເຂົາເວົ້າຄຳຈອງຫອງ
11 ພວກເຂົາສະກົດຮອຍຂ້ານ້ອຍ ດຽວນີ້ໄດ້ອ້ອມຂ້ານ້ອຍໄວ້
ພວກເຂົາຈັບຕາເບິ່ງຂ້ານ້ອຍ ເພື່ອຈະແກວ່ງຂ້ານ້ອຍລົງດິນ
12 ພວກເຂົາເປັນດັ່ງສິງໃຫຍ່ທີ່ກະຫາຍເຫຍື່ອຂອງມັນ
ເໝືອນດັ່ງສິງໃຫຍ່ໜຸ່ມຊຶ່ງດັກໂຈມຕີເຮັດຮ້າຍຢູ່ໃນທີ່ລັບ

13 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍລຸກຂຶ້ນຂັດຂວາງພວກເຂົາໄວ້ ແລະລົ້ມພວກເຂົາລົງ
ຂໍຊ່ວຍຊີວິດຂອງຂ້ານ້ອຍໃຫ້ພົ້ນຈາກຄົນຊົ່ວດ້ວຍດາບຂອງພຣະອົງ
14 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊ່ວຍຂ້ານ້ອຍໃຫ້ພົ້ນ
ຈາກມະນຸດຜູ້ຊຶ່ງເປັນພຣະຫັດຂອງພຣະອົງ ຈາກມະນຸດແຫ່ງໂລກນີ້
ຈາກມະນຸດຜູ້ຊຶ່ງມີສ່ວນຂອງຊີວິດນີ້

ຜູ້ຊຶ່ງພຣະອົງໃຫ້ທ້ອງຂອງພວກເຂົາເຕັມໄປດ້ວຍຊັບສົມບັດ
ທີ່ພຣະອົງເຊື່ອງໄວ້ ພວກເຂົາມີລູກຫລານໃຫ້ຮັບໂທດກຳນັ້ນຈົນທົນບໍ່ໄຫວ
ແລະສ່ວນທີ່ເຫລືອ ພວກເຂົາມອບໄວ້ໃຫ້ແກ່ລູກອ່ອນຂອງພວກເຂົາ

15 ສ່ວນຂ້ານ້ອຍ ຂ້ານ້ອຍຈະເຫັນພຣະພັກຂອງພຣະອົງ
ໃນຄວາມຊອບທຳ ເມື່ອຂ້ານ້ອຍຕື່ນຂຶ້ນ
ຂ້ານ້ອຍຈະພໍໃຈດ້ວຍພຣະລັກສະນະຂອງພຣະອົງ

# ບົດທີ 18

## ດາວິດສັນລະເສີນພຣະເຈົ້າ ເພາະເຫດພຣະພອນອັນຫລວງຫລາຍ

*ເຖິງຫົວໜ້ານັກຮ້ອງ ເພງສັນລະເສີນຂອງດາວິດ*
*ຜູ້ຮັບໃຊ້ຂອງພຣະຜູ້ເປັນເຈົ້າ ຊຶ່ງຖວາຍຖ້ອຍຄຳຂອງເພງບົດນີ້ແກ່ພຣະຜູ້ເປັນເຈົ້າ*
*ໃນມື້ທີ່ພຣະຜູ້ເປັນເຈົ້າຊ່ວຍເພິ່ນໃຫ້ພົ້ນຈາກກຳມືສັດຕູທັງຫລາຍຂອງເພິ່ນ*
*ແລະຈາກກຳພະຫັດຂອງຊາອູນ ເພິ່ນກ່າວວ່າ*

1 ຂ້າແດ່ພຣະຜູ້ເປັນເຈົ້າກຳລັງຂອງຂ້ານ້ອຍ ຂ້ານ້ອຍຈະຮັກພຣະອົງ
2 ພຣະຜູ້ເປັນເຈົ້າເປັນສີລາ ປ້ອມປາການ ແລະຜູ້ຊ່ວຍໃຫ້ພົ້ນຂອງຂ້ານ້ອຍ
ເປັນພຣະເຈົ້າຂອງຂ້ານ້ອຍ ເປັນກຳລັງຂອງຂ້ານ້ອຍ
ຊຶ່ງຂ້ານ້ອຍຈະວາງໃຈໃນພຣະອົງ ເປັນໂລ່ ເປັນພະລັງແຫ່ງຄວາມພົ້ນ
ຂອງຂ້ານ້ອຍ ເປັນທີ່ກຳບັງອັນເຂັ້ມແຂງຂອງຂ້ານ້ອຍ

3 ຂ້ານ້ອຍຈະຮ້ອງທູນຕໍ່ພຣະຜູ້ເປັນເຈົ້າຜູ້ສົມຄວນແກ່ການສັນລະເສີນ
ແລະຂ້ານ້ອຍຈະໄດ້ຮັບການຊ່ວຍໃຫ້ພົ້ນຈາກສັດຕູຂອງຂ້ານ້ອຍ

4 ຄວາມໂສກເສົ້າແຫ່ງຄວາມຕາຍອ້ອມຂ້ານ້ອຍໄວ້ກະແສແຫ່ງຄົນອະທຳ
ທີ່ຖ້ວມທັບຂ້ານ້ອຍເຮັດໃຫ້ຂ້ານ້ອຍຢ້ານ
5 ຄວາມໂສກເສົ້າແຫ່ງນະລົກອ້ອມຂ້ານ້ອຍໄວ້
ບ້ວງແຮ້ວມັດຈຸລາດຫຸ້ມຮັດຂ້ານ້ອຍ
6 ໃນຍາມທຸກໃຈ ຂ້ານ້ອຍຮ້ອງທູນຕໍ່ພຣະຜູ້ເປັນເຈົ້າ
ຂ້ານ້ອຍຮ້ອງທູນຂໍຄວາມຊ່ວຍເຫລືອຈາກພຣະເຈົ້າຂອງຂ້ານ້ອຍ
ພຣະອົງຮັບຟັງສຽງຂອງຂ້ານ້ອຍຈາກພຣະວິຫານຂອງພຣະອົງ
ແລະສຽງຮ້ອງຂອງຂ້ານ້ອຍໄດ້ຍິນຕໍ່ພຣະພັກພຣະອົງ
ໄປເຖິງພຣະກັນຂອງພຣະອົງ

7 ແລ້ວແຜ່ນດິນໂລກກໍສັ່ນສະເທືອນຄອນແຄນ
ຮາກຖານຂອງພູເຂົາກໍຫວັ່ນໄຫວດ້ວຍ ແລະສັ່ນສະເທືອນ
ເພາະພຣະອົງໂກດຮ້າຍ

8 ຄວັນອອກມາຈາກຮູດັງຂອງພຣະອົງ
ແລະແປວໄຟເຜົາຜານອອກມາຈາກພຣະໂອດຂອງພຣະອົງ
ຖ່ານກໍຕິດແປວໄຟນັ້ນ
9 ພຣະອົງແບ່ງແຍກຟ້າສະຫວັນລົງດ້ວຍ ແລະສະເດັດລົງມາ
ຄວາມມືດທຶບຢູ່ໃຕ້ພຣະບາດຂອງພຣະອົງ
10 ພຣະອົງປະທັບເທິງເຄຣຸບຕົນໜຶ່ງ ແລ້ວເຫາະໄປ
ພຣະອົງເຫາະໄປໂດຍປີກລົມຢ່າງວ່ອງໄວ
11 ພຣະອົງເຮັດໃຫ້ຄວາມມືດປົກຄຸມພຣະອົງໄວ້
ໃຫ້ເມກມືດ ແລະອຸ້ມນໍ້າເປັນສິ່ງຫຸ້ມຫໍ່ພຣະອົງ
12 ມີໝາກເຫັບ ແລະຖ່ານແປວໄຟແຕກອອກມາທະລຸເມກ
ຈາກຄວາມສະຫວ່າງສຸກໃສຕໍ່ໜ້າພຣະອົງ
13 ພຣະຜູ້ເປັນເຈົ້າໃຫ້ຟ້າຮ້ອງຄະນອງກ້ອງກັງວານໃນຟ້າສະຫວັນ
ແລະອົງຜູ້ສູງສຸດກໍເປັ່ງພຣະສຸລະສຽງ ຄືໝາກເຫັບ ແລະຖ່ານແປວໄຟ
14 ພຣະອົງຍິງລູກທະນູຂອງພຣະອົງອອກໄປ ເຮັດໃຫ້ພວກເຂົາແຕກຊະ ປີ້ວໄປ
ພຣະອົງປ່ອຍຟ້າແມບເຫລື້ອມ ເຮັດໃຫ້ພວກເຂົາແຕກກະຈັດກະຈາຍໄປ
15 ຂ້າແດ່ພຣະຜູ້ເປັນເຈົ້າ ແລ້ວກໍເຫັນກົ້ນທະເລຕະຫລອດຈົນຮາກຖານ
ຂອງໂລກກໍປາກົດແຈ້ງ
ເມື່ອພຣະອົງນາບຂູ່ທະເລດ້ວຍລົມທີ່ພວມພົ່ນອອກຈາກຮູດັງຂອງພຣະອົງ

16 ພຣະອົງເດ່ແຂນມາຈາກທີ່ສູງຈັບຂ້ານ້ອຍ
ພຣະອົງດຶງຂ້ານ້ອຍອອກມາຈາກນໍ້າຈຳນວນຫລວງຫລາຍ
17 ພຣະອົງຊ່ວຍຂ້ານ້ອຍໃຫ້ພົ້ນຈາກສັດຕູຜູ້ເຂັ້ມແຂງຂອງຂ້ານ້ອຍ
ແລະຈາກບັນດາຜູ້ທີ່ກຽດຊັງຂ້ານ້ອຍ
ເພາະພວກເຂົາມີອານຸພາບເກີນກວ່າຂ້ານ້ອຍຫລາຍ
18 ພວກເຂົາຫຸ້ມໂຈມຕີຂ້ານ້ອຍໃນມື້ທີ່ຂ້ານ້ອຍເກີດໄພພິບັດ
ແຕ່ພຣະຜູ້ເປັນເຈົ້າເປັນທີ່ເພິ່ງຂອງຂ້ານ້ອຍ
19 ພຣະອົງນຳຂ້ານ້ອຍອອກມາຍັງທີ່ກວ້າງໃຫຍ່ ແລະຊ່ວຍຂ້ານ້ອຍໃຫ້ພົ້ນ
ເພາະພຣະອົງຊື່ນຊົມຍິນດີໃນຂ້ານ້ອຍ

20 ພຣະຜູ້ເປັນເຈົ້າປະທານລາງວັນແກ່ຂ້ານ້ອຍ
ຕາມຄວາມຊອບທຳຂອງຂ້ານ້ອຍ
ພຣະອົງຕອບແທນຂ້ານ້ອຍ
ຕາມຄວາມສະອາດແຫ່ງມືຂອງຂ້ານ້ອຍ
21 ເພາະຂ້ານ້ອຍຮັກສາບັນດາເສັ້ນທາງຂອງພຣະຜູ້ເປັນເຈົ້າ
ແລະບໍ່ໄດ້ຫວິດຈາກພຣະເຈົ້າຂອງຂ້ານ້ອຍຢ່າງຄົນຊົ່ວຮ້າຍ

22 ເພາະຄຳຕັດສິນທັງໝົດຂອງພຣະອົງຢູ່ຕໍ່ໜ້າຂ້ານ້ອຍ
ແລະຂ້ານ້ອຍບໍ່ໄດ້ພັກຈາກກົດເກນຂອງພຣະອົງໄປເລີຍ
23 ຕໍ່ພຣະພັກພຣະອົງ ຂ້ານ້ອຍບໍ່ມີຕຳໜິ
ແລະຂ້ານ້ອຍຮັກສາຕົວໄວ້ບໍ່ເຮັດຄວາມຊົ່ວຊ້າ
24 ເພາະສະນັ້ນພຣະຜູ້ເປັນເຈົ້າຈຶ່ງຕອບແທນຂ້ານ້ອຍ
ຕາມຄວາມຊອບທຳຂອງຂ້ານ້ອຍ
ຕາມຄວາມສະອາດແຫ່ງມືຂອງຂ້ານ້ອຍໃນສາຍພຣະເນດຂອງພຣະອົງ

25 ພຣະອົງຈະສະແດງຄວາມເມດຕາຕໍ່ຜູ້ທີ່ມີຄວາມເມດຕາ
ພຣະອົງຈະສະແດງພຣະອົງຢ່າງຄົນສັດຊື່ຕໍ່ຄົນສັດຊື່
26 ພຣະອົງຈະສະແດງຄວາມບໍລິສຸດຂອງພຣະອົງຕໍ່ຜູ້ທີ່ບໍລິສຸດ
ພຣະອົງຈະສະແດງພຣະອົງເປັນສັດຕູຕໍ່ຜູ້ທີ່ຄົດໂກງ
27 ເພາະພຣະອົງຈະຊ່ວຍປະຊາຊົນທີ່ຍາກລຳບາກໃຫ້ພົ້ນ
ແຕ່ຕາທີ່ຈອງຫອງນັ້ນ ພຣະອົງຈະເຮັດໃຫ້ຕ່ຳລົງ
28 ພຣະອົງຈະໃຕ້ຕະກຽງຂອງຂ້ານ້ອຍພຣະຜູ້ເປັນເຈົ້າພຣະເຈົ້າຂອງຂ້ານ້ອຍ
ຈະກະທຳຄວາມມືດຂອງຂ້ານ້ອຍໃຫ້ສະຫວ່າງ
29 ພຣະເຈົ້າຂ້າ ຂ້ານ້ອຍຈະແລ່ນຜ່າກອງທັບໄປໄດ້ໂດຍພຣະອົງ
ແລະໂດຍພຣະເຈົ້າຂອງຂ້ານ້ອຍນີ້ຂ້ານ້ອຍ
ສາມາດໂດດຂ້າມກຳແພງໄດ້

30 ສຳລັບພຣະເຈົ້າພຣະອົງນີ້ ຫົນທາງຂອງພຣະອົງດີເລີດທຸກປະການ
ພຣະທຳຂອງພຣະຜູ້ເປັນເຈົ້າພິສູດແລ້ວເປັນຄວາມຈິງ
ພຣະອົງເປັນໂລ່ຂອງບັນດາຜູ້ທີ່ວາງໃຈໃນພຣະອົງ
31 ເພາະຜູ້ໃດຈະເປັນພຣະເຈົ້ານອກຈາກພຣະຜູ້ເປັນເຈົ້າ
ແລະຜູ້ໃດທໍ່ເປັນສີລາ ເວັ້ນແຕ່ພຣະເຈົ້າຂອງເຮົາ
32 ຄືພຣະເຈົ້າຜູ້ເອົາກຳລັງຄາດແອວຂອງຂ້ານ້ອຍໄວ້
ແລະເຮັດໃຫ້ທາງຂອງຂ້ານ້ອຍຮອບຄອບ
33 ພຣະອົງເຮັດໃຫ້ຕີນຂອງຂ້ານ້ອຍເໝືອນຢ່າງຕີນກວາງຕົວເມຍ
ແລະວາງຂ້ານ້ອຍໄວ້ເທິງທີ່ສູງ
34 ພຣະອົງຝຶກມືຂອງຂ້ານ້ອຍໃຫ້ເຮັດສົງຄາມ
ດັ່ງນັ້ນແຂນຂອງຂ້ານ້ອຍສາມາດເຮັດໃຫ້ຄັນທະນູເຫລັກກ້າຫັກໄດ້
35 ພຣະອົງປະທານໂລ່ແຫ່ງຄວາມພົ້ນຂອງພຣະອົງໃຫ້ຂ້ານ້ອຍ
ແລະພຣະຫັດຂວາຂອງພຣະອົງຄ້ຳຊູຂ້ານ້ອຍ
ແລະຊຶ່ງພຣະອົງນ້ອມພຣະໄທລົງ ກໍເພື່ອເຮັດໃຫ້ຂ້ານ້ອຍເປັນໃຫຍ່ຂຶ້ນ
36 ພຣະອົງປະທານທີ່ກວ້າງຂວາງສຳລັບທາງເດີນຂອງຂ້ານ້ອຍ

ຕີນຂອງຂ້ານ້ອຍຈຶ່ງບໍ່ພາດ
37 ຂ້ານ້ອຍໄລ່ຕາມສັດຕູຂອງຂ້ານ້ອຍທັນ
ແລະບໍ່ຖອຍຫລັງກັບຈົນກວ່າພວກເຂົາຖືກທຳລາຍໃຫ້ຈິບຫາຍໄປ
38 ຂ້ານ້ອຍໄດ້ແທງພວກເຂົາຊອດ ພວກເຂົາຈຶ່ງບໍ່ສາມາດລຸກຂຶ້ນໄດ້ອີກ
ພວກເຂົາລົ້ມລົງທີ່ໃຕ້ຕີນຂອງຂ້ານ້ອຍ
39 ເພາະພຣະອົງເອົາກຳລັງຄາດແອວຂ້ານ້ອຍໄວ້ເພື່ອເຮັດສົງຄາມ
ພຣະອົງເຮັດໃຫ້ພວກທີ່ລຸກຂຶ້ນຕໍ່ສູ້ກັບຂ້ານ້ອຍລົ້ມລົງຢ່າງລາບຄາບ
40 ພຣະອົງໂຜດປະທານຄໍຂອງສັດຕູຂອງຂ້ານ້ອຍແກ່ຂ້ານ້ອຍ
ເພື່ອຂ້ານ້ອຍຈະທຳລາຍບັນດາຜູ້ທີ່ກຽດຊັງຂ້ານ້ອຍໃຫ້ໝົດໄປ
41 ພວກເຂົາຮ້ອງໃຫ້ຊ່ວຍ ແຕ່ບໍ່ມີໃຜຊ່ວຍໃຫ້ລອດພົ້ນໄດ້
ພວກເຂົາຮ້ອງທູນ **ພຣະຜູ້ເປັນເຈົ້າ** ແຕ່ພຣະອົງບໍ່ໄດ້ຕອບພວກເຂົາ
42 ຂ້ານ້ອຍຈຶ່ງຕີພວກເຂົາແຫລກລະອຽດຄືຂີ້ຝຸ່ນທີ່ລົມພັດປິວໄປ
ຂ້ານ້ອຍຈຶ່ງໂຍນພວກເຂົາອອກໄປເໝືອນຂີ້ຕົມຕາມຖະໜົນ

43 ພຣະອົງຊ່ວຍຂ້ານ້ອຍໃຫ້ພົ້ນຈາກການຍາດຊີງກັບປະຊາຊົນ
ແລະຕັ້ງໃຫ້ຂ້ານ້ອຍເປັນຫົວໜ້າຂອງບັນດາປະຊາຊາດ
ຊົນຊາດທີ່ຂ້ານ້ອຍບໍ່ເຄີຍຮູ້ຈັກກໍໄດ້ບົວລະບັດຂ້ານ້ອຍ
44 ເມື່ອພວກເຂົາໄດ້ຍິນເຖິງຂ້ານ້ອຍ ພວກເຂົາກໍຈະເຊື່ອຟັງ
ຊາວຕ່າງດ້າວຈະໄດ້ມານ້ອມຟັງຂ້ານ້ອຍ
45 ຊາວຕ່າງດ້າວນັ້ນຈະມີກຳລັງໃຈ
ແລະຕົວສັ່ນອອກມາຈາກທີ່ກຳບັງອັນເຂັ້ມແຂງຂອງພວກເຂົາເຫລົ່ານັ້ນ

46 **ພຣະຜູ້ເປັນເຈົ້າ** ຊົງພຣະຊົນຢູ່ ແລະສີລາຂອງຂ້ານ້ອຍ
ເປັນທີ່ຄວນສັນລະເສີນ
ພຣະ**ເຈົ້າ** ແຫ່ງຄວາມພົ້ນຂອງຂ້ານ້ອຍເປັນທີ່ຍົກຍ້ອງ
47 ຄື **ພຣະເຈົ້າ** ຜູ້ປະທານການແກ້ແຄ້ນແກ່ຂ້ານ້ອຍ
ແລະປາບປາມບັນດາຊົນຊາດທັງຫລາຍ
ໃຫ້ຢູ່ພາຍໃຕ້ອຳນາດຂອງຂ້ານ້ອຍ
48 ຜູ້ຊ່ວຍຂ້ານ້ອຍໃຫ້ພົ້ນຈາກສັດຕູ**ພຣະເຈົ້າ** ຂ້ານ້ອຍຍົກຂ້ານ້ອຍຂຶ້ນ
ເໜືອພວກທີ່ລຸກຂຶ້ນຕໍ່ສູ້ກັບຂ້ານ້ອຍ
ພຣະອົງຊ່ວຍຂ້ານ້ອຍໃຫ້ພົ້ນຈາກຄົນທາລຸນໂຫດຮ້າຍ
49 ຂ້າແດ່ **ພຣະຜູ້ເປັນເຈົ້າ** ເພາະເຫດນີ້ ຂ້ານ້ອຍຈຶ່ງຈະຂໍເທີດທູນພຣະອົງໄວ້
ທ່າມກາງປະຊາຊາດທັງຫລາຍ
ແລະຮ້ອງເພງສັນລະເສີນພຣະນາມຂອງພຣະອົງ
50 ພຣະອົງປະທານໄຊຊະນະອັນຍິ່ງໃຫຍ່ແກ່ກະສັດຂອງພຣະອົງ

ແລະສະແດງຄວາມເມດຕາແກ່ຜູ້ທີ່ພຣະອົງເຈີມໄວ້ນັ້ນຄືດາວິດ
ແລະແກ່ເຊື້ອພະວົງຂອງເພິ່ນເປັນນິດ

# ບົດທີ 19

## ສະຫງ່າລາສີຂອງພຣະເຈົ້າ ໃນການນິລະມິດສ້າງ

1 ທ້ອງຟ້າສະແດງເຖິງລັດສະໝີຂອງ ພຣະເຈົ້າຢ່າງແຈ່ມແຈ້ງ
ແລະບອກເຖິງການກະທຳຂອງພຣະອົງຢ່າງຄັກແນ່.
2 ແຕ່ລະມື້ກໍຢືນຢັນເລື່ອງນີ້ແກ່ມື້ຕໍ່ມາ
ແຕ່ລະມື້ກໍກ່າວຢໍ້າເຖິງການນີ້ຈົນຮອດຄືນຂອງມື້ໃໝ່.
3 ບໍ່ມີຄຳປາໄສ ຫລືຄຳເວົ້າໃດໆທີ່ເວົ້າອອກມາ
ແລະສຽງໃດກໍບໍ່ໄດ້ຍິນທັງນັ້ນ.
4 ແຕ່ຍັງມີສຽງຂອງພວກປະກາດໄດ້ແຜ່ອອກໄປທົ່ວໂລກ
ຂ່າວຂອງພວກເຂົາໄດ້ແຜ່ອອກໄປຈົນສຸດແຜ່ນດິນ

ພຣະເຈົ້າຊົງກາງຜ້າເຕັນໃນທ້ອງຟ້າໃຫ້ແກ່ດວງຕາເວັນ.

5 ມັນໄດ້ສ່ອງແສງອອກມາເໝືອນດັ່ງເຈົ້າບ່າວ
ທີ່ກຳລັງຍ່າງກ້າວອອກມາຈາກຫ້ອງວິວາ
ແລະເໝືອນດັ່ງນັກກິລາທີ່ຟ້າວຟັ່ງເອົາໄຊຊະນະ
ໃນການແລ່ນເສັງກັນ.
6 ຊຶ່ງການນີ້ໄດ້ຕັ້ງຕົ້ນໄປຈົນເຖິງສຸດຂອບຟ້າ
ແລະໄດ້ໝຸນວຽນໄປອ້ອມບ່ອນອື່ນ
ໂດຍບໍ່ມີສິ່ງໃດສາມາດຫລົບຫລີກຈາກຄວາມຮ້ອນນັ້ນໄດ້.

## ພຣະທຳຂອງພຣະຜູ້ເປັນເຈົ້າ

7 ພຣະທຳຂອງ ພຣະຜູ້ເປັນເຈົ້ານັ້ນຖືກຕ້ອງ
ແລະເຮັດໃຫ້ມີຊີວິດໃໝ່
ຄຳສັ່ງຂອງພຣະອົງໄວ້ວາງໃຈໄດ້
ແລະຊົງປະທານຄວາມສະຫລາດແກ່ຜູ້ທີ່ເບົາປັນຍາ.
8 ພຣະທຳຂອງ ພຣະຜູ້ເປັນເຈົ້ານັ້ນຖືກຕ້ອງ
ແລະຜູ້ທີ່ປະຕິບັດຕາມພຣະທຳນີ້ກໍມີຄວາມສຸກ
ພຣະທຳຂອງພຣະອົງຊົງເຕັມໄປດ້ວຍຄວາມສັດຈິງ
ແລະເຮັດໃຫ້ມີຄວາມເຂົ້າໃຈຢ່າງແຈ່ມແຈ້ງ.
9 ການຢຳເກງ ພຣະຜູ້ເປັນເຈົ້າ ເປັນການດີ
ແລະດຳລົງຄົງຢູ່ຕະຫລອດໄປ

ການຕັດສິນຂອງພຣະອົງຊົງສັດຊື່
ແລະຍຸດຕິທຳເລື້ອຍໆ.
10 ການຕັດສິນນີ້ປະເສີດເໜືອກວ່າຄຳຊັ້ນດີ
ແລະຍັງຫວານເໜືອກວ່າຍອດນໍ້າເຜິ້ງ.
11 ການຕັດສິນນີ້ໃຫ້ຄວາມຮູ້ແກ່ຂ້ານ້ອຍຊຶ່ງເປັນຜູ້ຮັບໃຊ້ຂອງພຣະອົງ
ຂ້ານ້ອຍໄດ້ຮັບລາງວັນຍ້ອນການເຊື່ອຟັງພຣະທຳນັ້ນ.

12 ບໍ່ມີຜູ້ໃດເຫັນຄວາມຜິດພາດຂອງຕົວເອງໄດ້
ຂໍໂຜດໃຫ້ຂ້ານ້ອຍຫລີກໜີຈາກຄວາມຜິດທີ່ປິດບັງໄວ້.
13 ຂໍໂຜດຊ່ວຍໃຫ້ຂ້ານ້ອຍປອດໄພ ແລະພົ້ນຈາກຄວາມຜິດ
ທີ່ເຮັດດ້ວຍເຈດຕະນາດ້ວຍ
ຂໍຢ່າໃຫ້ສິ່ງເຫລົ່ານີ້ຄຸ້ມຄອງຂ້ານ້ອຍ
ເພື່ອຂ້ານ້ອຍຈະເປັນທີ່ຖືກຕ້ອງຢ່າງສົມບູນ
ແລະໃຫ້ມີອິດສະຫລະຈາກຄວາມບາບອັນໜັກໜ່ວງນັ້ນ.
14 ຂໍຊົງໂຜດຮັບເອົາຄຳເວົ້າ ແລະຄວາມຄິດຂອງຂ້ານ້ອຍ
ຂ້າແດ່ພຣະຜູ້ເປັນເຈົ້າພຣະອົງຊົງເປັນທີ່ເພິ່ງຂອງຂ້ານ້ອຍ
ແລະເປັນຜູ້ທີ່ໄຖ່ຂ້ານ້ອຍອອກຈາກຄວາມຜິດ.

# ບົດທີ 20

## ການທູນຂໍພຣະພອນໂດຍທາງສະຖານທີ່ບໍລິສຸດ

*ເຖິງຫົວໜ້ານັກຮ້ອງ ເພງສັນລະເສີນຂອງດາວິດ*

1 ຂໍພຣະຜູ້ເປັນເຈົ້າຟັງທ່ານໃນມື້ຍາກລຳບາກ
ພຣະນາມຂອງພຣະເຈົ້າແຫ່ງຢາໂຄບພິທັກຮັກສາທ່ານ
2 ຂໍພຣະອົງໃຫ້ຄວາມຊ່ວຍເຫລືອມາຈາກສະຖານທີ່ບໍລິສຸດ
ແລະເພີ່ມກຳລັງໃຫ້ແກ່ທ່ານມາຈາກເມືອງຊີໂອນ
3 ຂໍລະນຶກເຖິງເຄື່ອງຖວາຍທັງໝົດຂອງທ່ານ
ແລະພໍພຣະໄທເຄື່ອງເຜົາບູຊາຂອງທ່ານທີ່ນຳມາ.

*ເຊລາ*

4 ຂໍໃຫ້ທານຕາມໃຈປາດຖະໜາຂອງທ່ານດ້ວຍ
ແລະໃຫ້ໂຄງການທີ່ທ່ານຄິດນັ້ນສຳເລັດທັງໝົດ
5 ເພື່ອພວກເຮົາຈະໄດ້ໂຫ່ຮ້ອງເນື່ອງດ້ວຍຄວາມພົ້ນຂອງທ່ານ
ແລະຍົກທຸງຂຶ້ນໃນພຣະນາມພຣະເຈົ້າຂອງເຮົາ
ຂໍພຣະຜູ້ເປັນເຈົ້າໂຜດໃຫ້ຄຳທູນຂໍທັງໝົດຂອງທ່ານສຳເລັດເຖີດ

6 ບັດນີ້ ຂ້ານ້ອຍຮູ້ວ່າພຣະຜູ້ເປັນເຈົ້າຈະຊ່ວຍຜູ້ທີ່ພຣະອົງເຈີມໄວ້

ພຣະອົງຈະຟັງພວກເຂົາຈາກຟ້າສະຫວັນອັນບໍລິສຸດຂອງພຣະອົງ
ແລະໂດຍໄຊຊະນະອັນຊົງລິດທານຸພາບດ້ວຍພຣະຫັດຂວາຂອງພຣະອົງ
7 ບາງຄົນກໍວາງໃຈໃນລົດຮົບ ບາງຄົນກໍວາງໃຈໃນມ້າ
ແຕ່ເຮົາຈະລະນຶກເຖິງພຣະນາມພຣະຜູ້ເປັນເຈົ້າພຣະເຈົ້າຂອງເຮົາ
8 ພວກເຂົາທັງຫລາຍຈະລົ້ມລົງໄປ ແຕ່ເຮົາຈະລຸກຂຶ້ນຢືນຢູ່ຢ່າງໝັ້ນຄົງ
9 ຂ້າແດ່ພຣະຜູ້ເປັນເຈົ້າຂໍຊ່ວຍຂ້ານ້ອຍທັງຫລາຍໃຫ້ລອດພົ້ນເຖີດ
ຂໍໃຫ້ກະສັດຟັງເມື່ອຂ້ານ້ອຍທັງຫລາຍຮ້ອງທູນຕໍ່ທ່ານ

# ບົດທີ 21

## ການຂອບພຣະຄຸນສຳລັບໄຊຊະນະ

*ເຖິງຫົວໜ້ານັກຮ້ອງ ເພງສັນລະເສີນຂອງດາວິດ*

1 ຂ້າແດ່ພຣະຜູ້ເປັນເຈົ້າກະສັດຈະຊົມຊື່ນຍິນດີໃນພຣະກຳລັງຂອງພຣະອົງ
ເພິ່ນຈະປິຕິຍິນດີຢ່າງໃຫຍ່ໃນຄວາມພົ້ນຂອງພຣະອົງ
2 ພຣະອົງປະທານຕາມໃຈປາດຖະໜາຂອງເພິ່ນ
ແລະບໍ່ໄດ້ຫ້າມສິ່ງທີ່ຮີມປາກເພິ່ນທູນຂໍ

*ເຊລາ*

3 ເພາະພຣະອົງອຳນວຍພອນອັນດີແກ່ເພິ່ນ
ພຣະອົງສວມມົງກຸດທອງຄຳບໍລິສຸດເທິງຫົວຂອງເພິ່ນ
4 ເພິ່ນທູນຂໍຊີວິດ ແລະພຣະອົງກໍປະທານຊີວິດຢືນຍາວເປັນນິດນິລັນດອນ
5 ສະຫງ່າລາສີຂອງເພິ່ນຍິ່ງໃຫຍ່ເນື່ອງດ້ວຍຄວາມພົ້ນຂອງພຣະອົງ
ພຣະອົງປະດັບກະສັດດ້ວຍຍົດສັກ ແລະຄວາມງົດງາມ ດ້ວຍລິດອຳນາດ
6 ພຣະເຈົ້າຂ້າ ພຣະອົງໂຜດໃຫ້ເພິ່ນຮັບພຣະພອນເປັນນິດ
ແລະເຮັດໃຫ້ເພິ່ນຍິນດີຕໍ່ເບື້ອງພຣະພັກຂອງພຣະອົງ
7 ເພາະກະສັດວາງໃຈໃນພຣະຜູ້ເປັນເຈົ້າ
ແລະດ້ວຍຄວາມເມດຕາຂອງພຣະອົງຜູ້ສູງສຸດ ເພິ່ນຈະບໍ່ຫວັ່ນໄຫວເລີຍ

8 ພຣະຫັດຂອງພຣະອົງຈະຄົ້ນພົບເຫລົ່າສັດຕູທັງຫລາຍ
ພຣະຫັດຂວາຈະພົບບັນດາຜູ້ທີ່ກຽດຊັງພຣະອົງ
9 ເມື່ອພຣະອົງພຣະພິໂລດ
ພຣະອົງຈະເຮັດໃຫ້ພວກເຂົາຮ້ອນດັ່ງເຕົາໄຟ
ພຣະຜູ້ເປັນເຈົ້າຈະກືນພວກເຂົາດ້ວຍພຣະພິໂລດຂອງພຣະອົງ
ແລະໄຟຈະເຜົາຜານພວກເຂົາ
10 ພຣະອົງຈະທຳລາຍລູກຫລານຂອງພວກເຂົາຈາກແຜ່ນດິນໂລກ
ແລະເຊື້ອສາຍຂອງພວກເຂົາຈະພົ້ນຈາກລູກທັງຫລາຍຂອງມະນຸດ

11 ແມ່ນພວກເຂົາທັງຫລາຍໄດ້ປອງຮ້າຍຕໍ່ພຣະອົງ
ແມ່ນພວກເຂົາປະດິດເລື່ອງຊົ່ວຮ້າຍ ພວກເຂົາກໍຈະກະທຳບໍ່ສຳເລັດ
12 ສະນັ້ນ ພຣະອົງຈະເຮັດໃຫ້ພວກເຂົາພ່າຍໜີໄປ ເມື່ອພຣະອົງຈະຊົງຍິງທະນູໄປ
ຕໍ່ໜ້າພວກເຂົາທັນທີ
13 ຂ້າແດ່ພຣະຜູ້ເປັນເຈົ້າຂໍເປັນທີ່ຍົກຍ້ອງເຊີດຊູໃນພຣະກຳລັງຂອງພຣະອົງ
ຂ້ານ້ອຍທັງຫລາຍຈະຮ້ອງເພງສັນລະເສີນລິດທານຸພາບຂອງພຣະອົງ

# ບົດທີ 22

## ຄຳຮ້ອງອັນແສນເຈັບປວດ ແລະບົດເພງສັນລະເສີນ

1 ພຣະເຈົ້າຂອງຂ້ານ້ອຍພຣະເຈົ້າຂອງຂ້ານ້ອຍ
ເຫດໃດພຣະອົງຈຶ່ງໄດ້ຊົງປະປ່ອຍຂ້ານ້ອຍ?
ຂ້ານ້ອຍໄດ້ຮ້ອງຂໍຄວາມຊ່ອຍເຫລືອຢ່າງສິ້ນຄວາມຫວັງ
ແຕ່ກໍຍັງບໍ່ທັນໄດ້ຮັບ.
2 ພຣະອົງເຈົ້າຂ້າ ຕະຫລອດທັງວັນ ຂ້ານ້ອຍໄດ້ຮ້ອງຫາພຣະອົງ
ແຕ່ພຣະອົງບໍ່ໄດ້ຊົງຕອບຂ້ານ້ອຍ
ຂ້ານ້ອຍຮ້ອງຫາພຣະອົງໃນຍາມກາງຄືນ
ຈົນບໍ່ໄດ້ພັກຜ່ອນ.
3 ພຣະອົງຊົງເປັນອົງບໍລິສຸດທີ່ປະທັບຢູ່ເທິງພຣະທີ່ນັ່ງ
ຊົງເປັນຜູ້ທີ່ພວກອິສຣາເອນພາກັນກ່າວສັນລະເສີນ.
4 ພວກບັນພະບູລຸດຂອງຂ້ານ້ອຍເຊື່ອໝັ້ນໃນພຣະອົງ
ພວກເພິ່ນເຊື່ອພຣະອົງ ແລະພຣະອົງໄດ້ຊ່ອຍໃຫ້ພົ້ນ.
5 ພວກເພິ່ນໄດ້ຮ້ອງຫາພຣະອົງ ແລະກໍໄດ້ພົ້ນຈາກອັນຕະລາຍ
ພວກເພິ່ນເຊື່ອພຣະອົງ ແລະບໍ່ໄດ້ສູນເສຍຄວາມຫວັງ.

6 ດຽວນີ້ ຂ້ານ້ອຍບໍ່ເປັນຄືຄົນ ແຕ່ຄືຕົວໜອນ
ຊຶ່ງທຸກໆຄົນກຽດຊັງ ແລະໝິ່ນປະໝາດ.
7 ທຸກໆ ຄົນທີ່ເຫັນຂ້ານ້ອຍກໍຫົວຂວັນໃສ່ຂ້ານ້ອຍ
ພວກເຂົາແລບລີ້ນ ແລະແກວ່ງຫົວໃສ່ຂ້ານ້ອຍ.
8 ພວກເຂົາເວົ້າວ່າ, “ເຈົ້າໄວ້ວາງໃຈພຣະຜູ້ເປັນເຈົ້າ
ເປັນຫຍັງພຣະອົງຈຶ່ງບໍ່ຊ່ອຍໃຫ້ພົ້ນ
ຖ້າວ່າພຣະອົງພໍພຣະໄທໃນເຈົ້າ
ເປັນຫຍັງພຣະອົງບໍ່ຊົງຊ່ອຍເຫລືອເຈົ້າ?”

9 ພຣະອົງຊົງເປັນຜູ້ນຳຂ້ານ້ອຍໃຫ້ເກີດມາຢ່າງປອດໄພ
ເມື່ອຂ້ານ້ອຍຍັງນ້ອຍ ພຣະອົງໄດ້ຊົງປົກປັກຮັກສາຂ້ານ້ອຍ.

10 ນັບແຕ່ຂ້ານ້ອຍເກີດອອກມາ ພຣະອົງຊົງເປັນພຣະເຈົ້າຂອງຂ້ານ້ອຍ
ຂ້ານ້ອຍໄວ້ວາງໃຈໃນພຣະອົງ.
11 ຂໍຢ່າຢູ່ຫ່າງໄກຈາກຂ້ານ້ອຍ
ເພາະຄວາມລຳບາກເຂົ້າມາໃກ້ແລ້ວ
ແລະບໍ່ມີຜູ້ໃດຊ່ອຍຂ້ານ້ອຍໄດ້.

12 ສັດຕູຫລາຍຄົນໄດ້ອ້ອມຮອບຂ້ານ້ອຍເໝືອນດັ່ງຝູງງົວປ່າ
ພວກເຂົາທັງໝົດອ້ອມຮອບພວກຂ້ານ້ອຍໄວ້.
13 ພວກເຂົາອ້າປາກເໝືອນໂຕສິງ
ທີ່ກຳລັງສົ່ງສຽງຮ້ອງ ແລະກຳລັງຈະທຳຮ້າຍຂ້ານ້ອຍ.
14 ເຫື່ອແຮງຂອງຂ້ານ້ອຍໄດ້ສູນເສຍໄປໝົດ
ເໝືອນດັ່ງນໍ້າທີ່ໄຫລຊຶມລົງດິນ
ແລະກະດູກຂອງຂ້ານ້ອຍກໍຫລຸດອອກຈາກມັນ
ຫົວໃຈຂອງຂ້ານ້ອຍໄດ້ເປື່ອຍລະລາຍເໝືອນດັ່ງຂີ້ເຜີ້ງ.
15 ສ່ວນລຳຄໍຂອງຂ້ານ້ອຍກໍແຫ້ງຄືຂີ້ຝຸ່ນດິນ
ແລະລີ້ນຂ້ານ້ອຍກໍຫົດເຂົ້າໄປຫາເຫລືອກ
ພຣະອົງໄດ້ຊົງປະຂ້ານ້ອຍໄວ້ເໝືອນຄົນຕາຍແລ້ວ.
16 ຝູງຄົນຊົ່ວອ້ອມຮອບຂ້ານ້ອຍໄວ້
ເໝືອນດັ່ງຝູງໝາທີ່ຫຍັບເຂົ້າມາໃກ້ຂ້ານ້ອຍ
ພວກມັນກັດຈີກມືຕີນຂອງຂ້ານ້ອຍ.
17 ກະດູກທຸກໆ ຊິ້ນສ່ວນຂອງຂ້ານ້ອຍກໍແລເຫັນໄດ້
ສັດຕູທັງຫລາຍຈ້ອງຕາເບິ່ງຂ້ານ້ອຍ.
18 ພວກມັນເອົາເສື້ອຜ້າຂອງຂ້ານ້ອຍແບ່ງປັນກັນ
ແລະເອົາເສື້ອຄຸມຂອງຂ້ານ້ອຍມາຈົກສະຫລາກກັນ.

19 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍພຣະອົງຢ່າຊົງຢູ່ຫ່າງໄກຈາກຂ້ານ້ອຍ
ພຣະຜູ້ຊ່ອຍໃຫ້ພົ້ນຂອງຂ້ານ້ອຍ ຂໍຊົງຟ້າວມາຊ່ອຍຂ້ານ້ອຍແດ່ທ້ອນ.
20 ຂໍພຣະອົງຊົງຊ່ອຍຂ້ານ້ອຍໃຫ້ພົ້ນຈາກດາບ
ແລະຊົງຊ່ອຍຊີວິດຂອງຂ້ານ້ອຍໃຫ້ພົ້ນຈາກຝູງໝາຮ້າຍ.
21 ຈົ່ງຊ່ອຍຊີວິດຂ້ານ້ອຍຈາກຝູງສິງ
ຂ້ານ້ອຍໝົດຫົນທາງເມື່ອຢູ່ຕໍ່ໜ້າງົວກະທິງເຫລົ່ານັ້ນ.

22 ຂ້ານ້ອຍຈະບອກປະຊາຊົນຂອງຂ້ານ້ອຍໃນສິ່ງທີ່ພຣະອົງຊົງກະທຳ
ຂ້ານ້ອຍຈະສັນລະເສີນພຣະອົງເວລາປະຊຸມ.
23 ພວກເຈົ້າທີ່ຢຳເກງພຣະຜູ້ເປັນເຈົ້າ ຈົ່ງສັນລະເສີນພຣະອົງ

ພວກເຈົ້າທີ່ເປັນເຊື້ອສາຍຂອງຢາໂຄບ ຈົ່ງຖວາຍກຽດແດ່ພຣະອົງ
ແລະພວກເຈົ້າທີ່ເປັນຊາວ ອິສຣາເອນ ຈົ່ງນະມັດສະການພຣະອົງ.
24 ພຣະອົງບໍ່ໄດ້ປະປ່ອຍຄົນທຸກຍາກ ຫລືເຮັດເສີຍເມີຍ
ຕໍ່ການທົນທຸກທໍລະມານຂອງພວກເຂົາ
ບໍ່ໄດ້ງວາກພຣະພັກຈາກພວກເຂົາ
ແຕ່ໄດ້ຊົງຕອບ ເມື່ອພວກເຂົາຮ້ອງຂໍຄວາມຊ່ວຍເຫລືອຈາກພຣະອົງ.

25 ຂ້ານ້ອຍຈະສັນລະເສີນໃນສິ່ງທີ່ພຣະອົງຊົງກະທຳຕໍ່ທ່າມກາງທີ່ປະຊຸມ
ຂ້ານ້ອຍຈະຖວາຍບູຊາດັ່ງທີ່ຂ້ານ້ອຍໄດ້ສັນຍາໄວ້
ຕໍ່ໜ້າທຸກໆຄົນທີ່ຢຳເກງພຣະອົງ.
26 ຄົນທຸກຍາກຈະກິນອີ່ມ
ສ່ວນຜູ້ທີ່ເຂົ້າມາຫາ ພຣະຜູ້ເປັນເຈົ້າ ຈະສັນລະເສີນພຣະອົງ
ຂໍໃຫ້ພວກເຂົາຈະເລີນຮຸ່ງເຮືອງຂຶ້ນຕະຫລອດໄປ.

27 ຊົນຊາດທັງປວງຈະລະນຶກເຖິງ ພຣະຜູ້ເປັນເຈົ້າ
ພວກເຂົາຈະກັບມາຫາພຣະອົງໃນທຸກໆ ບ່ອນທົ່ວໂລກນີ້
ເຊື້ອສາຍຕ່າງໆຈະຂາບໄຫວ້ພຣະອົງ.
28 ພຣະຜູ້ເປັນເຈົ້າ ຊົງເປັນເຈົ້າມະຫາຊີວິດ
ແລະພຣະອົງກໍຊົງປົກຄອງເໜືອຊົນຊາດທັງປວງ.
29 ພວກຄົນທີ່ຈອງຫອງທັງໝົດຈະນ້ອມຕົວລົງຕໍ່ພຣະອົງ
ມະນຸດທຸກໆ ຄົນຈະນ້ອມຕົວລົງຕໍ່ພຣະພັກພຣະອົງ
ແລະຕະຫລອດທັງທຸກຄົນທີ່ລໍຄອຍຄວາມຕາຍ.
30 ພວກເຊື້ອສາຍຕໍ່ມາຈະຮັບໃຊ້ພຣະອົງ
ມະນຸດຈະກ່າວເລື່ອງຂອງ ພຣະຜູ້ເປັນເຈົ້າ
ຕະຫລອດຊົ່ວເຊື້ອສາຍຂອງພວກເຂົາ.
31 ປະຊາຊົນທີ່ຍັງບໍ່ທັນໄດ້ເກີດມາຈະໄດ້ຍິນວ່າ,
"ພຣະຜູ້ເປັນເຈົ້າ ໄດ້ຊົງຊ່ວຍໄພ່ພົນຂອງພຣະອົງໃຫ້ພົ້ນ."

# ບົດທີ 23

## ພຣະຜູ້ເປັນເຈົ້າຊົງເປັນຜູ້ລ້ຽງຂ້ານ້ອຍ

1 ພຣະຜູ້ເປັນເຈົ້າ ຊົງເປັນຜູ້ລ້ຽງຂ້ານ້ອຍ
ຂ້ານ້ອຍມີທຸກສິ່ງທີ່ຂ້ານ້ອຍຕ້ອງການ.
2 ພຣະອົງຊົງພາຂ້ານ້ອຍໃຫ້ພັກເຊົາຢູ່ໃນທົ່ງຫຍ້າອັນຂຽວສົດ
ພຣະອົງຊົງພາຂ້ານ້ອຍໄປໃນບ່ອນມີບໍ່ນ້ຳອັນສົດໃສ ແລະງຽບສະຫງັດ.
3 ພຣະອົງຊົງໃຫ້ຂ້ານ້ອຍມີແຮງຂຶ້ນໃໝ່

ແລະຊົງພາຂ້ານ້ອຍໄປໃນທາງທີ່ຖືກຕ້ອງ
ຕາມທີ່ພຣະອົງຊົງສັນຍາໄວ້.
4 ຂ້າແດ່ພຣະຜູ້ເປັນເຈົ້າ ເຖິງແມ່ນວ່າທາງຈະຜ່ານຄວາມມືດມົນ
ອັນເລິກລັບ ຂ້ານ້ອຍກໍຈະບໍ່ຢ້ານ
ເພາະວ່າພຣະອົງຊົງຢູ່ກັບຂ້ານ້ອຍ
ໄມ້ຄ້ອນ ແລະໄມ້ເທົ້າທີ່ພຣະອົງຊົງໃຊ້
ກໍຊ່ອຍໃຫ້ຂ້ານ້ອຍພົ້ນໄພ.

5 ພຣະອົງຊົງລ້ຽງດູຂ້ານ້ອຍຢ່າງອີ່ມໜຳສຳລານ
ທ່າມກາງສັດຕູທັງຫລາຍ
ພຣະອົງຊົງຕ້ອນຮັບຂ້ານ້ອຍໂດຍຖອກນ້ຳມັນຫອມໃສ່ເທິງຫົວຂ້ານ້ອຍ
ແລະຊົງໃຫ້ຈອກຂ້ານ້ອຍເຕັມລົ້ນຢູ່.
6 ຄວາມດີ ແລະຄວາມຮັກຂອງພຣະອົງຈະຢູ່ກັບຂ້ານ້ອຍຕະຫລອດຊົ່ວຊີວິດ
ແລະພຣະວິຫານຂອງພຣະອົງກໍຈະເປັນເຮືອນຢູ່ຂອງຂ້ານ້ອຍຕະຫລອດໄປ.

## ບົດທີ 24
## ເຈົ້າຊີວິດອົງຍິ່ງໃຫຍ່

1 ແຜ່ນດິນໂລກ ແລະທຸກໆ ສິ່ງໃນໂລກນີ້ເປັນຂອງພຣະຜູ້ເປັນເຈົ້າ
ຜືນແຜ່ນດິນ ແລະທຸກຄົນທີ່ອາໄສຢູ່ກໍເປັນຂອງພຣະອົງ.
2 ພຣະອົງຊົງສ້າງໂລກນີ້ຢູ່ເທິງນ້ຳ
ແລະພຣະອົງຊົງວາງຮາກຖານແຜ່ນດິນຢູ່ພື້ນມະຫາສະໝຸດອັນເລິກ.

3 ຜູ້ໃດອາດຂຶ້ນໄປເທິງພູຂອງພຣະຜູ້ເປັນເຈົ້າໄດ້
ຜູ້ໃດທີ່ໄດ້ຮັບອະນຸຍາດຂຶ້ນໄປໃນພຣະວິຫານອັນບໍລິສຸດຂອງພຣະອົງໄດ້.
4 ຜູ້ນັ້ນຕ້ອງເປັນຄົນຂາວສະອາດທັງການກະທຳ ແລະຄວາມຄິດ
ແລະເປັນຜູ້ທີ່ບໍ່ຍອມນະມັດສະການຮູບເຄົາລົບ
ຫລືບໍ່ຕັ້ງຄຳສັນຍາເທັດ.
5 ແລ້ວພຣະຜູ້ເປັນເຈົ້າຈະອວຍພອນຄົນນັ້ນ
ພຣະເຈົ້າຊຶ່ງເປັນພຣະຜູ້ຊ່ອຍຈະປະກາດຄວາມຊອບທຳຂອງລາວ.
6 ປະຊາຊົນຢ່າງນີ້ແຫລະ ເປັນຜູ້ທີ່ຫຍັບເຂົ້າມາຫາພຣະຜູ້ເປັນເຈົ້າ
ແລະຕໍ່ພຣະພັກພຣະເຈົ້າຂອງຢາໂຄບ.

*ເຊລາ*

7 ດັ່ງນັ້ນ ຈົ່ງໄຂປະຕູເມືອງອອກໃຫ້ກວ້າງ
ແລະຈົ່ງໄຂປະຕູອັນເກົ່າແກ່ອອກ
ແລ້ວເຈົ້າຊີວິດອົງຊົງສະຫງ່າລາສີຈະສະເດັດເຂົ້າໄປ.

8 ແມ່ນໃຜເປັນເຈົ້າຊີວິດອົງຊົງສະຫງ່າລາສີນີ້?
ພຣະອົງຊົງເປັນພຣະຜູ້ເປັນເຈົ້າອົງຊົງມີອຳນາດ ແລະເຂັ້ມແຂງ
ແລະເປັນພຣະຜູ້ເປັນເຈົ້າຜູ້ຊົງຊະນະໃນສະໜາມຮົບ.
9 ດັ່ງນັ້ນ ຈົ່ງໄຂປະຕູເມືອງອອກໃຫ້ກວ້າງ
ແລະຈົ່ງໄຂປະຕູອັນເກົ່າແກ່ອອກ
ແລ້ວເຈົ້າຊີວິດອົງຊົງສະຫງ່າລາສີຈະສະເດັດເຂົ້າໄປ.
10 ແມ່ນໃຜເປັນເຈົ້າຊີວິດອົງຊົງສະຫງ່າລາສີ
ແມ່ນພຣະຜູ້ເປັນເຈົ້າແຫ່ງຈັກກະວານຊົງເປັນພຣະເຈົ້າອົງຍິ່ງໃຫຍ່.

*ເຊລາ*

# ບົດທີ 25

## ການອ້ອນວອນຂໍການນຳພາ ແລະການປ້ອງກັນ

1 ຂ້າແດ່ພຣະຜູ້ເປັນເຈົ້າ ຂ້ານ້ອຍວິງວອນຕໍ່ພຣະອົງ.
2 ພຣະເຈົ້າຂອງຂ້ານ້ອຍ ຂ້ານ້ອຍເຊື່ອໄວ້ວາງໃຈໃນພຣະອົງ
ຂໍຊົງຊ່ອຍຂ້ານ້ອຍໃຫ້ພົ້ນຈາກຄວາມອັບອາຍຂາຍໜ້າ
ເນື່ອງຈາກການແຕກພ່າຍ
ຂໍຢ່າໃຫ້ສັດຕູເຍາະເຍີ້ຍຂ້ານ້ອຍ.
3 ຜູ້ທີ່ເຊື່ອວາງໃຈໃນພຣະອົງຈະບໍ່ພ່າຍແພ້
ແຕ່ຈະຕົກຖືກຜູ້ທີ່ຄິດກະບົດຕໍ່ສູ້ພຣະອົງ.

4 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງສັ່ງສອນຂ້ານ້ອຍໃຫ້ຮູ້ຈັກຫົນທາງຂອງພຣະອົງ
ແລະຂໍຊົງໂຜດໃຫ້ຂ້ານ້ອຍຮູ້ຈັກວິທີທາງນີ້.
5 ຂໍຊົງສັ່ງສອນຂ້ານ້ອຍໃຫ້ດຳລົງຢູ່ຕາມຄວາມຈິງຂອງພຣະອົງ
ເພາະພຣະອົງຊົງເປັນພຣະຜູ້ຊ່ອຍຂອງຂ້ານ້ອຍ
ຂ້ານ້ອຍເຊື່ອໄວ້ວາງໃຈໃນພຣະອົງຕະຫລອດເວລາ.
6 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງລະນຶກເຖິງພຣະເມດຕາ
ແລະຄວາມຮັກອັນໝັ້ນຄົງຂອງພຣະອົງ
ຊຶ່ງພຣະອົງຊົງສະແດງໃຫ້ເຫັນຕັ້ງແຕ່ໃດໆມາ.
7 ຂໍຊົງໃຫ້ອະໄພການບາບ ແລະການຜິດພາດໃນຄາວ
ທີ່ຂ້ານ້ອຍຍັງເປັນເດັກນ້ອຍຢູ່
ຂ້າແດ່ພຣະຜູ້ເປັນເຈົ້າ ຍ້ອນຄວາມຮັກອັນໝັ້ນຄົງ ແລະຄວາມດີຂອງພຣະອົງ
ຂໍຊົງລະນຶກເຖິງຂ້ານ້ອຍໄວ້ເທີ້ນ.

8 ພຣະຜູ້ເປັນເຈົ້າຊົງສັດຊື່ ແລະດີ
ພຣະອົງຊົງສັ່ງສອນຄົນບາບໃຫ້ຮູ້ຈັກທາງທີ່ຄວນປະພຶດ.

9 ພຣະອົງຊົງນຳພາຜູ້ທີ່ຖ່ອມຕົວໄປຕາມທາງທີ່ຖືກຕ້ອງ
ແລະຊົງສັ່ງສອນພວກເຂົາໃຫ້ຮູ້ຈັກນ້ຳພຣະໄທຂອງພຣະອົງ.
10 ພຣະອົງຊົງນຳພາທຸກໆຄົນທີ່ເຊື່ອຟັງຄຳໝັ້ນສັນຍາແລະຄຳສັ່ງຂອງພຣະອົງ
ດ້ວຍຄວາມຮັກ ແລະຄວາມສັດຈິງ.
11 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງຮັກສາຄຳສັນຍາຂອງພຣະອົງ
ແລະຂໍຊົງອະໄພຄວາມຜິດຂອງຂ້ານ້ອຍ
ເພາະຂ້ານ້ອຍມີບາບເຫລືອຫລາຍ.

12 ສ່ວນຜູ້ທີ່ຢຳເກງພຣະຜູ້ເປັນເຈົ້າ
ແລະລູກຫລານຂອງພວກເຂົາກໍຈະຢູ່ໃນປະເທດນີ້ຢ່າງປອດໄພ.
13 ພວກເຂົາຈະເລີນຂຶ້ນເລື້ອຍໆ
ແລະລູກຫລານຂອງພວກເຂົາກໍຈະຢູ່ໃນປະເທດນີ້ຢ່າງປອດໄພ.
14 ພຣະຜູ້ເປັນເຈົ້າຊົງເປັນເພື່ອນກັບຜູ້ທີ່ຢຳເກງພຣະອົງ
ແລະຊົງສັ່ງສອນພວກເຂົາເຖິງຄຳໝັ້ນສັນຍາຂອງພຣະອົງ.
15 ຂ້ານ້ອຍແນມຫາພຣະອົງ ເພື່ອຂໍຄວາມຊ່ອຍເຫລືອຕະຫລອດເວລາ
ແລະພຣະອົງຊົງຊ່ອຍຊີວິດຂ້ານ້ອຍໃຫ້ພົ້ນຈາກອັນຕະລາຍ.

16 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍພຣະອົງຊົງຫັນມາເມດຕາກະລຸນາ
ແກ່ຂ້ານ້ອຍທ້ອນ ເພາະຂ້ານ້ອຍຢູ່ໂດດດ່ຽວແລະອ່ອນແຮງ.
17 ຂໍພຣະອົງຊົງບັນເທົາຄວາມທຸກໃຈຂອງຂ້ານ້ອຍ
ແລະຊ່ອຍຂ້ານ້ອຍໃຫ້ພົ້ນຈາກຄວາມທຸກລຳບາກທຸກຢ່າງ.
18 ຂໍຊົງພິຈາລະນາເບິ່ງຄວາມທຸກໂສກ
ການທໍລະມານທຸກຢ່າງຂອງຂ້ານ້ອຍ
ແລະຍົກໂທດຄວາມຜິດທຸກຢ່າງຂອງຂ້ານ້ອຍ.
19 ຂໍພຣະອົງຊົງທອດພຣະເນດສັດຕູທັງປວງທີ່ຂ້ານ້ອຍມີຢູ່
ວ່າພວກເຂົາກຽດຊັງຂ້ານ້ອຍຫລາຍປານໃດ.
20 ຂໍຊົງປົກປັກຮັກສາ ແລະຊ່ອຍຂ້ານ້ອຍໃຫ້ພົ້ນໄພ
ແລະຢ່າໃຫ້ຂ້ານ້ອຍພ່າຍແພ້.
ເພາະວ່າຂ້ານ້ອຍເຂົ້າມາເພິ່ງພາອາໄສພຣະອົງ
21 ຂໍໃຫ້ຜົນແຫ່ງຄວາມດີ ແລະຄວາມສັດຊື່ມາຄ້ຳຊູຢູ້ສິ່ງ
ເພາະວ່າຂ້ານ້ອຍເຊື່ອພຣະອົງ.

22 ພຣະອົງເຈົ້າຂ້າ ຂໍຊົງໂຜດຊ່ອຍຊາວອິສຣາເອນໄພ່ພົນຂອງພຣະອົງ
ໃຫ້ພົ້ນຈາກຄວາມທຸກຍາກລຳບາກທັງປວງ.

# ບົດທີ 26

## ດາວິດເພິ່ງພຣະເຈົ້າໃນຄວາມສຸດຈະລິດຂອງເພິ່ນ

*ເພງສັນລະເສີນຂອງດາວິດ*

1 ຂ້າແດ່ພຣະຜູ້ເປັນເຈົ້າຂໍຕັດສິນເຂົ້າຂ້າງຂ້ານ້ອຍ
ເພາະຂ້ານ້ອຍດຳເນີນຢູ່ໃນຄວາມສຸດຈະລິດຂອງຂ້ານ້ອຍ
ຂ້ານ້ອຍໄດ້ວາງໃຈໃນພຣະຜູ້ເປັນເຈົ້າສະນັ້ນ ຂ້ານ້ອຍຈະບໍ່ຜິດພາດ
2 ຂ້າແດ່ພຣະຜູ້ເປັນເຈົ້າຂໍພິສູດຂ້ານ້ອຍ ແລະລອງຂ້ານ້ອຍເຖີດ
ທົດສອບໃຈ ແລະຈິດຂອງຂ້ານ້ອຍສາ
3 ເພາະຄວາມເມດຕາຂອງພຣະອົງຢູ່ຕໍ່ຕາຂ້ານ້ອຍ
ແລະຂ້ານ້ອຍດຳເນີນໃນຄວາມຈິງຂອງພຣະອົງ

4 ຂ້ານ້ອຍບໍ່ໄດ້ນັ່ງຢູ່ກັບຄົນບໍ່ມີປະໂຫຍດ
ຫລືຈະບໍ່ໄດ້ເວົ້າລົມກັບຄົນຫລອກລວງ
5 ຂ້ານ້ອຍກຽດຊັງຊຸມນຸມຄົນທີ່ເຮັດຊົ່ວ ແລະຂ້ານ້ອຍຈະບໍ່ນັ່ງກັບຄົນຊົ່ວ
6 ຂ້າແດ່ພຣະຜູ້ເປັນເຈົ້າເພື່ອຄວາມບໍລິສຸດ ຂ້ານ້ອຍຈະຊຳລະມື
ແລະຈະຍ່າງຢູ່ຮອບແທ່ນບູຊາຂອງພຣະອົງ
7 ຂ້ານ້ອຍປະກາດດ້ວຍສຽງແຫ່ງການໂມທະນາພຣະຄຸນ
ແລະບອກເຖິງພຣະລາຊະກິດມະຫັດສະຈັນທັງໝົດຂອງພຣະອົງ

8 ຂ້າແດ່ພຣະຜູ້ເປັນເຈົ້າຂ້ານ້ອຍຮັກພຣະວິຫານອັນເປັນທີ່ປະທັບຂອງພຣະອົງ
ແລະສະຖານທີ່ປະທັບແຫ່ງກຽດຕິຍົດຂອງພຣະອົງ
9 ຂໍຢ່າກວາດຈິດວິນຍານຂ້ານ້ອຍໄປກັບຄົນບາບ
ຫລືກວາດຊີວິດຂອງຂ້ານ້ອຍໄປກັບຄົນກະຫາຍເລືອດ
10 ຄືຄົນຊຶ່ງໃນມືຂອງພວກເຂົາມີແຜນການຊົ່ວ
ແລະມືຂວາຂອງພວກເຂົາເຕັມດ້ວຍສິນບົນ

11 ແຕ່ສຳລັບຂ້ານ້ອຍ ຂ້ານ້ອຍຍ່າງໃນຄວາມສຸດຈະລິດ
ຂໍໄຖ່ຂ້ານ້ອຍ ແລະກະລຸນາຕໍ່ຂ້ານ້ອຍ
12 ຕີນຂອງຂ້ານ້ອຍຢຽບຢູ່ເທິງພື້ນທີ່ກ້ຽງດີ
ຂ້ານ້ອຍຈະສັນລະເສີນພຣະຜູ້ເປັນເຈົ້າໃນທີ່ຊຸມນຸມຊົນ

# ບົດທີ 27

## ການອ້ອນວອນດ້ວຍຄວາມໄວ້ໃຈ

1 ພຣະຜູ້ເປັນເຈົ້າຊົງເປັນແສງສະຫວ່າງ
ເປັນພຣະຜູ້ຊ່ອຍໃຫ້ພົ້ນຂອງຂ້ານ້ອຍ

ຂ້ານ້ອຍຈະບໍ່ຢ້ານຜູ້ໜຶ່ງຜູ້ໃດ
ພຣະອົງຊົງຄຸ້ມຄອງຂ້ານ້ອຍຈາກໄພອັນຕະລາຍທຸກຢ່າງ
ຂ້ານ້ອຍຈະບໍ່ຢ້ານ.
2 ເມື່ອຄົນຊົ່ວຕໍ່ສູ້ຂ້ານ້ອຍ ແລະພະຍາຍາມສັງຫານຊີວິດຂ້ານ້ອຍ
ພວກເຂົາໄດ້ເຕະສະດຸດຈົນລົ້ມລົງ.
3 ຖ້າວ່າກອງທະຫານອ້ອມຮອບຂ້ານ້ອຍໄວ້
ຂ້ານ້ອຍກໍຈະບໍ່ຢ້ານ
ຖ້າວ່າສັດຕູຕໍ່ສູ້ຂ້ານ້ອຍ
ຂ້ານ້ອຍກໍຍັງເຊື່ອໝັ້ນໃນ ພຣະເຈົ້າຢູ່.

4 ຂ້ານ້ອຍໄດ້ທູນຂໍພຽງສິ່ງດຽວຕໍ່ ພຣະຜູ້ເປັນເຈົ້າ
ຄືອາໄສຢູ່ໃນພຣະວິຫານຂອງພຣະອົງຕະຫລອດຊົ່ວຊີວິດຂອງຂ້ານ້ອຍ
ເພື່ອເບິ່ງຄວາມດີຂອງພຣະອົງ
ແລະທູນຂໍການນຳພາຂອງພຣະອົງຢູ່ທີ່ນັ້ນ.
5 ໃນຄາວຕົກທຸກໄດ້ຍາກ
ພຣະອົງຈະຊົງປົກປັກຮັກສາຂ້ານ້ອຍ
ພຣະອົງຈະຊົງໃຫ້ຂ້ານ້ອຍຫລົບໄພຢູ່ໃນພຣະວິຫານຂອງພຣະອົງ
ແລະຊົງໃຫ້ຢູ່ເທິງໂງ່ນຫີນສູງຢ່າງປອດໄພ.
6 ດັ່ງນັ້ນ ຂ້ານ້ອຍຈະຊະນະສັດຕູທີ່ອ້ອມຮອບຂ້ານ້ອຍ
ຂ້ານ້ອຍຈະຖວາຍເຄື່ອງບູຊາໃນພຣະວິຫານຂອງພຣະອົງ
ດ້ວຍສຽງໂຮຮ້ອງຍິນດີ
ຂ້ານ້ອຍຈະຮ້ອງເພງສັນລະເສີນພຣະອົງ.

7 ຂ້າແດ່ ພຣະຜູ້ເປັນເຈົ້າ ຂໍຊົງຟັງສຽງຂ້ານ້ອຍ
ເມື່ອຂ້ານ້ອຍຮ້ອງຫາພຣະອົງ
ຂໍຊົງເມດຕາກະລຸນາ ແລະຕອບຂ້ານ້ອຍດ້ວຍ.
8 ພຣະອົງຊົງກ່າວວ່າ, “ຈົ່ງມາຫາເຮົາ”
ຂ້າແດ່ ພຣະຜູ້ເປັນເຈົ້າ ຂ້ານ້ອຍຈະມາຫາພຣະອົງ.
9 ຂໍພຣະອົງຢ່າຊົງລີ້ ຢ່າຊົງພຣະພິໂລດ
ແລະຢ່າຊົງໄລ່ຂ້າໃຊ້ຂອງພຣະອົງໜີ
ພຣະອົງຊົງເປັນ ພຣະຜູ້ຊ່ອຍ ຂອງຂ້ານ້ອຍ
ຂໍຢ່າຊົງໜີຈາກຂ້ານ້ອຍໄປເລີຍ
ພຣະເຈົ້າຜູ້ຊົງຊ່ອຍໃຫ້ພົ້ນຂອງຂ້ານ້ອຍ.
10 ພໍ່ແມ່ຂອງຂ້ານ້ອຍອາດຈະປະປ່ອຍຂ້ານ້ອຍໄປ
ແຕ່ພຣະອົງຈະຮັກສາຂ້ານ້ອຍໄວ້.

11 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງສັ່ງສອນຂ້ານ້ອຍໃຫ້ຮູ້ຈັກພຣະປະສົງຂອງພຣະອົງ
ແລະຂໍຊົງພາຂ້ານ້ອຍໄປໃນທາງອັນສັດຊື່
ເພາະຂ້ານ້ອຍມີສັດຕູຫລາຍຄົນ.
12 ຂໍຢ່າຊົງປະປ່ອຍຂ້ານ້ອຍໄວ້ກັບສັດຕູ
ຜູ້ທີ່ຕໍ່ສູ້ຂ້ານ້ອຍດ້ວຍຄຳຫລອກລວງ
ແລະດ້ວຍລັກສະນະທ່າທາງທີ່ໜ້າຢ້ານກົວ

13 ແນ່ນອນທີ່ສຸດ ຂ້ານ້ອຍຈະຢູ່ຕໍ່ໄປ
ເພື່ອເບິ່ງຄວາມດີຂອງພຣະອົງທີ່ມີຕໍ່ໄພ່ພົນ.
14 ຈົ່ງໄວ້ວາງໃຈໃນ ພຣະຜູ້ເປັນເຈົ້າ
ຈົ່ງມີຄວາມເຊື່ອແລະຢ່າເສຍຄວາມຫວັງ
ຈົ່ງໄວ້ໃຈໃນ ພຣະຜູ້ເປັນເຈົ້າ.

# ບົດທີ 28

## ດາວິດທູນຂໍເລື່ອງສັດຕູຂອງເພິ່ນ

*ເພງສັນລະເສີນຂອງດາວິດ*

1 ຂ້າແດ່ພຣະຜູ້ເປັນເຈົ້າ ຂ້ານ້ອຍຮ້ອງທູນຕໍ່ພຣະອົງ
ສີລາຂອງຂ້ານ້ອຍ ຂໍຢ່າໃຫ້ພຣະກັນໜວກຕໍ່ຂ້ານ້ອຍ
ຢ້ານວ່າຖ້າພຣະອົງງຽບຢູ່ຕໍ່ຂ້ານ້ອຍ
ຂ້ານ້ອຍຈະເປັນເໝືອນຄົນເຫລົ່ານັ້ນທີ່ລົງໄປຍັງປາກຄວາມຕາຍ
2 ຂໍຮັບຟັງສຽງອ້ອນວອນຂອງຂ້ານ້ອຍ
ເມື່ອຂ້ານ້ອຍຮ້ອງທູນຂໍຄວາມອຸປະຖຳຈາກພຣະອົງ
ເມື່ອຂ້ານ້ອຍຍົກມືຂອງຂ້ານ້ອຍຂຶ້ນໄປທີ່ບໍລິສຸດທີ່ສຸດຂອງພຣະອົງ

3 ຂໍຢ່າກວາດຂ້ານ້ອຍໄປພ້ອມກັບຄົນຊົ່ວ
ກັບບັນດາຄົນທີ່ກະທຳຄວາມຊົ່ວຊ້າ
ຜູ້ເວົ້າຈາຢ່າງສັນຕິກັບເພື່ອນບ້ານຂອງຕົນ
ແຕ່ການປອງຮ້າຍຢູ່ໃນໃຈຂອງພວກເຂົາທັງຫລາຍ
4 ຂໍລົງໂທດພວກເຂົາຕາມການງານ
ແລະຕາມຄວາມຊົ່ວແຫ່ງກິດຈະການຂອງພວກເຂົາ
ຂໍລົງໂທດພວກເຂົາຕາມຝີມືຂອງພວກເຂົາ ແລະຕອບແທນພວກເຂົາຕາມສົມຄວນ
5 ເພາະພວກເຂົາບໍ່ນັບຖືພຣະລາຊະກິດຂອງ ພຣະຜູ້ເປັນເຈົ້າ
ຫລືສິ່ງທີ່ເຮັດດ້ວຍພຣະຫັດຂອງພຣະອົງ
ພຣະອົງຈະທຳລາຍພວກເຂົາລົງ
ແລະບໍ່ສ້າງພວກເຂົາຂຶ້ນອີກ

6 ສາທຸການແດ່ພຣະຜູ້ເປັນເຈົ້າ
ເພາະພຣະອົງຮັບຟັງສຽງອ້ອນວອນຂອງຂ້ານ້ອຍ
7 ພຣະຜູ້ເປັນເຈົ້າເປັນກຳລັງ ແລະເປັນໂລ່ຂອງຂ້ານ້ອຍ
ຈິດໃຈຂອງຂ້ານ້ອຍວາງໃຈໃນພຣະອົງ
ຂ້ານ້ອຍຈຶ່ງໄດ້ຮັບຄວາມອຸປະຖຳ
ສະນັ້ນ ຈິດໃຈຂອງຂ້ານ້ອຍຈຶ່ງຊົມຊື່ນຍິນດີຫລາຍ
ຂ້ານ້ອຍຈະຖວາຍໂມທະນາແດ່ພຣະອົງດ້ວຍບົດເພງຂອງຂ້ານ້ອຍ

8 ພຣະຜູ້ເປັນເຈົ້າເປັນກຳລັງຂອງປະຊາຊົນຂອງພຣະອົງທັງຫລາຍ
ພຣະອົງເປັນປ້ອມອັນແຂງແຮງຂອງຜູ້ຮັບເຈີມຈາກພຣະອົງ

### ການອະທິຖານເພື່ອປະຊາຊົນ

9 ຂໍຊ່ວຍປະຊາຊົນຂອງພຣະອົງໃຫ້ລອດພົ້ນ
ແລະອຳນວຍພຣະພອນແກ່ມໍລະດົກຂອງພຣະອົງ
ຂໍເປັນຜູ້ລ້ຽງດູພວກເຂົາ ແລະຫອບຫິ້ວພວກເຂົາໄປເປັນນິດ

# ບົດທີ 29

## ດາວິດຂໍໃຫ້ບັນດາເຈົ້ານາຍຖວາຍສະຫງ່າລາສີແດ່ພຣະຜູ້ເປັນເຈົ້າ

*ເພງສັນລະເສີນຂອງດາວິດ*

1 ຂ້າແດ່ຊາວສະຫວັນທັງຫລາຍ ຈົ່ງຖວາຍແດ່ພຣະຜູ້ເປັນເຈົ້າເຖີດ
ຈົ່ງຖວາຍສະຫງ່າລາສີ ແລະພຣະກຳລັງແດ່ພຣະຜູ້ເປັນເຈົ້າ
2 ຈົ່ງຖວາຍສະຫງ່າລາສີຊຶ່ງສົມຄວນ
ແກ່ພຣະນາມຂອງພຣະອົງແດ່ພຣະຜູ້ເປັນເຈົ້າ
ຈະນະມັດສະການພຣະຜູ້ເປັນເຈົ້າດ້ວຍເຄື່ອງປະດັບແຫ່ງຄວາມບໍລິສຸດ

3 ພຣະສຸລະສຽງຂອງພຣະຜູ້ເປັນເຈົ້າຢູ່ເທິງນໍ້າ
ທັງຫລາຍພຣະເຈົ້າແຫ່ງສະຫງ່າລາສີໃຫ້ຟ້າຮ້ອງກ້ອງກັງວານ
ຄືພຣະຜູ້ເປັນເຈົ້າຢູ່ເໜືອນໍ້າທັງຫລາຍ
4 ພຣະສຸລະສຽງຂອງພຣະຜູ້ເປັນເຈົ້າລິດທານຸພາບ
ພຣະສຸລະສຽງຂອງພຣະຜູ້ເປັນເຈົ້າເຕັມໄປດ້ວຍຄວາມສູງສົ່ງ
5 ພຣະສຸລະສຽງຂອງພຣະຜູ້ເປັນເຈົ້າຫັກຕົ້ນແປກ
ພຣະຜູ້ເປັນເຈົ້າຫັກຕົ້ນແປກແຫ່ງເລບານອນ
6 ພຣະອົງເຮັດໃຫ້ພວກເຂົາເຕັ້ນເໝືອນດັ່ງລູກງົວ
ເລບານອນແລະພູເຮີໂມນເໝືອນດັ່ງງົວກະທິງໜຸ່ມ
7 ພຣະສຸລະສຽງຂອງພຣະຜູ້ເປັນເຈົ້າແຍກແປວໄຟອອກຈາກກັນ

8 ພຣະສຸລະສຽງຂອງ ພຣະຜູ້ເປັນເຈົ້າ ສັ່ນຖິ່ນແຫ້ງແລ້ງກັນດານ
ພຣະຜູ້ເປັນເຈົ້າ ສັ່ນຖິ່ນແຫ້ງແລ້ງກັນດານແຫ່ງເມືອງ ກາເດັດ
9 ພຣະສຸລະສຽງຂອງ ພຣະຜູ້ເປັນເຈົ້າ ເຮັດໃຫ້ກວາງໂຕແມ່ເກີດລູກ
ແລະເຮັດໃຫ້ປ່າດົງຖືກທຳລາຍ
ແລະໃນພຣະວິຫານຂອງພຣະອົງທຸກຄົນກ່າວເຖິງສະຫງ່າລາສີຂອງພຣະອົງ

10 ພຣະຜູ້ເປັນເຈົ້າປະທັບຢູ່ເໜືອເທິງນໍ້າເລິກ
ພຣະຜູ້ເປັນເຈົ້າປະທັບເປັນກະສັດຢູ່ເປັນນິດ
11 ພຣະຜູ້ເປັນເຈົ້າ ຈະປະທານກຳລັງແກ່ປະຊາຊົນຂອງພຣະອົງ
ພຣະຜູ້ເປັນເຈົ້າ ຈະອຳນວຍພຣະພອນ
ແກ່ປະຊາຊົນຂອງພຣະອົງໃຫ້ມີສັນຕິສຸກ

# ບົດທີ 30

## ດາວິດສັນລະເສີນພຣະເຈົ້າ ເພາະພຣະອົງຊ່ວຍເພິ່ນພົ້ນໄດ້

*ເພງສັນລະເສີນ ແລະບົດເພງຂອງດາວິດ ໃນພິທີຖວາຍພະລາຊະວັງຂອງດາວິດ*

1 ຂ້າແດ່ພຣະຜູ້ເປັນເຈົ້າ ຂ້ານ້ອຍຈະຍົກຍໍພຣະກຽດຂອງພຣະອົງ
ເພາະພຣະອົງດຶງຂ້ານ້ອຍຂຶ້ນມາ
ແລະບໍ່ໄດ້ໃຫ້ຄູ່ແຂ່ງຂອງຂ້ານ້ອຍຊົມຊື່ນຍິນດີ ເພາະຂ້ານ້ອຍ
2 ຂ້າແດ່ພຣະຜູ້ເປັນເຈົ້າ ພຣະເຈົ້າຂອງຂ້ານ້ອຍ
ຂ້ານ້ອຍຮ້ອງທູນຂໍຄວາມຊ່ວຍເຫລືອຈາກພຣະອົງ
ແລະພຣະອົງໄດ້ຮັກສາຂ້ານ້ອຍໃຫ້ຫາຍ
3 ຂ້າແດ່ພຣະຜູ້ເປັນເຈົ້າພຣະອົງນຳຈິດວິນຍານຂອງຂ້ານ້ອຍ
ຂຶ້ນມາຈາກຄວາມຕາຍ ໃຫ້ຂ້ານ້ອຍມີຊີວິດ
ເພື່ອຂ້ານ້ອຍບໍ່ຕ້ອງລົງໄປສູ່ຂຸມຝັງສົບ

4 ທ່ານຜູ້ບໍລິສຸດທັງຫລາຍຂອງພຣະອົງເອີຍ
ຈົ່ງຮ້ອງສັນລະເສີນ ພຣະຜູ້ເປັນເຈົ້າ
ແລະຖວາຍໂມທະນາເມື່ອລະນຶກເຖິງຄວາມບໍລິສຸດຂອງພຣະອົງ
5 ເພາະພຣະພິໂລດຂອງພຣະອົງນັ້ນເປັນແຕ່ຊົ່ວຂະນະໜຶ່ງ
ແລະຄວາມຍິນດີຂອງພຣະອົງນັ້ນຕະຫລອດຊີວິດ
ການຮ້ອງໄຫ້ອາດຈະໄຫລຫລັ່ງຢູ່ໃນເວລາຄືນໜຶ່ງ
ແຕ່ຄວາມຊື່ນບານຈະມາໃນເວລາເຊົ້າ

6 ຂ້ານ້ອຍເວົ້າໃນຄວາມຈະເລີນຮຸ່ງເຮືອງຂອງຂ້ານ້ອຍວ່າ
"ຂ້ານ້ອຍຈະບໍ່ຫວັ່ນໄຫວເລີຍ"

7 ຂ້າແດ່ພຣະຜູ້ເປັນເຈົ້າ ໂດຍຄວາມຍິນດີຂອງພຣະອົງ
ພຣະອົງສະຖາປະນາຂ້ານ້ອຍໄວ້ຢ່າງພູເຂົາທີ່ເຂັ້ມແຂງ
ເມື່ອພຣະອົງເຊື່ອງພຣະພັກຂອງພຣະອົງ ຂ້ານ້ອຍກໍລຳບາກໃຈ
8 ຂ້າແດ່ພຣະຜູ້ເປັນເຈົ້າຂ້ານ້ອຍຮ້ອງທູນຕໍ່ພຣະອົງ
ແລະຂ້ານ້ອຍໄດ້ອ້ອນວອນພຣະຜູ້ເປັນເຈົ້າວ່າ
9 "ຈະໄດ້ກຳໄລຫຍັງຈາກເລືອດຂອງຂ້ານ້ອຍເມື່ອຂ້ານ້ອຍຕ້ອງຕາຍໄປ
ຂີ້ຝຸ່ນດິນຈະສັນເສີນພຣະອົງຫລື
ມັນຈະບອກເລົ່າເລື່ອງຄວາມຈິງຂອງພຣະອົງຫລື
10 ຂ້າແດ່ພຣະຜູ້ເປັນເຈົ້າຂໍຮັບຟັງ ແລະກະລຸນາຕໍ່ຂ້ານ້ອຍ
ຂ້າແດ່ພຣະຜູ້ເປັນເຈົ້າຂໍເປັນຜູ້ຊ່ວຍເຫຼືອຂອງຂ້ານ້ອຍ"

11 ສຳລັບຂ້ານ້ອຍ ພຣະອົງປ່ຽນການໄວ້ທຸກເປັນການເຕັ້ນລຳ
ພຣະອົງແກ້ເສື້ອຜ້າກະສອບຂອງຂ້ານ້ອຍອອກ
ແລະຄາດແອວຂ້ານ້ອຍດ້ວຍຄວາມຍິນດີ
12 ເພື່ອຈິດວິນຍານຂອງຂ້ານ້ອຍຈະຮ້ອງເພງສັນລະເສີນພຣະອົງ
ແລະບໍ່ມິດງຽບ ຂ້າແດ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງຂ້ານ້ອຍ
ຂ້ານ້ອຍຈະຖວາຍໂມທະນາແດ່ພຣະອົງເປັນນິດ

# ບົດທີ 31

## ການອ້ອນວອນພຣະເຈົ້າດ້ວຍຄວາມເຊື່ອ

1 ຂ້າແດ່ພຣະຜູ້ເປັນເຈົ້າຂ້ານ້ອຍມາເພິ່ງພາອາໄສພຣະອົງ
ຂໍຢ່າໃຫ້ຂ້ານ້ອຍພ່າຍແພ້ເລີຍ
ພຣະອົງຊົງເປັນພຣະເຈົ້າອົງທ່ຽງທຳ
ຂ້ານ້ອຍອ້ອນວອນຫາພຣະອົງ
ຂໍພຣະອົງຊົງຊ່ອຍຂ້ານ້ອຍໃຫ້ພົ້ນໄພດ້ວຍ.
2 ຂໍຊົງຟັງສຽງທູນຂໍຂອງຂ້ານ້ອຍ
ແລະຊົງຊ່ອຍໃຫ້ຂ້ານ້ອຍພົ້ນໄພໄວໆ
ຂໍພຣະອົງຊົງເປັນທີ່ເພິ່ງ ແລະຄຸ້ມຄອງຂ້ານ້ອຍ
ຂໍພຣະອົງຊົງເປັນເຄື່ອງປ້ອງກັນຊ່ອຍຂ້ານ້ອຍໃຫ້ພົ້ນໄພ.
3 ພຣະອົງຊົງເປັນບ່ອນເພິ່ງແລະເຄື່ອງປ້ອງກັນຂ້ານ້ອຍ
ຂໍຊົງຊັກຈູງ ແລະນຳພາຂ້ານ້ອຍດັ່ງທີ່ພຣະອົງຊົງສັນຍາໄວ້.
4 ຂໍຊົງຊ່ອຍຂ້ານ້ອຍໃຫ້ພົ້ນຈາກບ້ວງແຮ້ວທີ່ພວກເຂົາຫ້າງໃສ່ຂ້ານ້ອຍ
ເພາະພຣະອົງເປັນທີ່ເພິ່ງພາອາໄສຂອງຂ້ານ້ອຍ.
5 ຂ້ານ້ອຍຂໍມອບຕົວໄວ້ໃນການພິທັກຮັກສາຂອງພຣະອົງ

ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງຈະຕ້ອງຊ່ອຍຂ້ານ້ອຍໃຫ້ພົ້ນໄພ
ເພາະພຣະອົງຊົງເປັນ ພຣະເຈົ້າ ອົງສັດຊື່.

6 ພຣະອົງຊົງກຽດຊັງຜູ້ທີ່ຂາບໄຫວ້ຮູບເຄົາລົບ
ແຕ່ຂ້ານ້ອຍເຊື່ອພຣະອົງ.
7 ຂ້ານ້ອຍຈະຊົມຊື່ນຍິນດີ
ຍ້ອນຄວາມຮັກອັນໝັ້ນຄົງຂອງພຣະອົງ
ພຣະອົງຊົງທອດພຣະເນດເຫັນຄວາມທຸກທໍລະມານຂອງຂ້ານ້ອຍ
ພຣະອົງຊົງຮູ້ຈັກຄວາມທຸກລຳບາກຂອງຂ້ານ້ອຍ.
8 ພຣະອົງບໍ່ໄດ້ຊົງອະນຸຍາດໃຫ້ສັດຕູຊະນະຂ້ານ້ອຍ
ແຕ່ຊົງຮັກສາຂ້ານ້ອຍໃຫ້ປອດໄພ.

9 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງເມດຕາກະລຸນາຂ້ານ້ອຍດ້ວຍ
ເພາະຂ້ານ້ອຍຢູ່ໃນຄວາມທຸກໃຈ
ດວງຕາຂອງຂ້ານ້ອຍອິດເມື່ອຍຍ້ອນການຮ້ອງໄຫ້ເຫລືອລົ້ນ
ຂ້ານ້ອຍອິດອ່ອນສຸດກຳລັງ.
10 ຄວາມເສຍໃຈພາໃຫ້ຊີວິດຂອງຂ້ານ້ອຍສິ້ນສຸດລົງ
ແລະການຮ້ອງໄຫ້ຄ່ຳຄວນພາໃຫ້ອາຍຸຂອງຂ້ານ້ອຍສັ້ນເຂົ້າ
ຍ້ອນຄວາມທຸກລຳບາກ ຂ້ານ້ອຍຈຶ່ງເປັນຄົນອ່ອນແອ
ແມ່ນແຕ່ກະດູກຂອງຂ້ານ້ອຍກໍຈະສູນເສຍໄປ.
11 ສັດຕູທັງຫລາຍຂອງຂ້ານ້ອຍຫົວຂວັນໃສ່ຂ້ານ້ອຍ
ເພື່ອນບ້ານໄດ້ໝິ່ນປະໝາດຂ້ານ້ອຍ
ຜູ້ທີ່ຮູ້ຈັກຂ້ານ້ອຍກໍຢ້ານກົວຂ້ານ້ອຍ
ເມື່ອພວກເຂົາເຫັນຂ້ານ້ອຍຢູ່ກາງທາງ ພວກເຂົາກໍປົບໜີ.
12 ທຸກຄົນໄດ້ຫລົງລືມຂ້ານ້ອຍ ຄືກັບວ່າຂ້ານ້ອຍໄດ້ຕາຍໄປ
ຂ້ານ້ອຍເປັນເໝືອນຂອງຖິ້ມແລ້ວ.
13 ຂ້ານ້ອຍໄດ້ຍິນພວກສັດຕູທັງຫລາຍຊຸ່ມກັນ
ສິ່ງທີ່ໜ້າຢ້ານຕົກໃຈໄດ້ອ້ອມຮອບຂ້ານ້ອຍ
ພວກສັດຕູໄດ້ວາງແຜນຕໍ່ສູ້
ແລະເຮັດກົນອຸບາຍສັງຫານຂ້ານ້ອຍ.

14 ຂ້າແດ່ພຣະຜູ້ເປັນເຈົ້າ ຂ້ານ້ອຍເຊື່ອພຣະອົງ
ພຣະອົງຊົງເປັນ ພຣະເຈົ້າ ຂອງຂ້ານ້ອຍ.
15 ຂ້ານ້ອຍຢູ່ໃນການພິທັກຮັກສາຂອງພຣະອົງເລື້ອຍມາ
ຂໍຊົງຊ່ອຍຂ້ານ້ອຍໃຫ້ພົ້ນຈາກສັດຕູ

ແລະໃຫ້ພົ້ນຈາກຜູ້ທີ່ຄອຍເຝົ້າຂົ່ມເຫັງຂ້ານ້ອຍດ້ວຍ.
16 ຂ້ານ້ອຍເປັນຜູ້ຮັບໃຊ້ຂອງພຣະອົງ
ຂໍຊົງຫລຽວແລເມດຕາຂ້ານ້ອຍ
ຍ້ອນຄວາມເມດຕາອັນໝັ້ນຄົງຂອງພຣະອົງ ຂໍຊົງຊ່ອຍຂ້ານ້ອຍໃຫ້ພົ້ນໄພ.
17 ຂ້າແດ່ພຣະຜູ້ເປັນເຈົ້າ ຂ້ານ້ອຍຮ້ອງຫາພຣະອົງ
ຂໍຢ່າໃຫ້ຂ້ານ້ອຍພ່າຍແພ້
ແຕ່ຂໍໃຫ້ຄົນຊົ່ວທັງຫລາຍພ່າຍແພ້
ແລະໃຫ້ພວກເຂົາມິດງຽບຢູ່ໃນພິພົບຄົນຕາຍ.
18 ຄົນຂີ້ຕົວະທີ່ອວດດີຈອງຫອງ
ແລະເວົ້າປະໝາດຄົນຊອບທຳ ຈົ່ງມິດຢູ່.

19 ສິ່ງທີ່ພຣະອົງຮັກສາໄວ້ສຳລັບຜູ້ທີ່ຢຳເກງພຣະອົງກໍປະເສີດຫລາຍ
ການທີ່ພຣະອົງຊົງປົກປັກຮັກສາຜູ້ທີ່ໄວ້ວາງໃຈໃນພຣະອົງ
ກໍເປັນການແປກປະຫລາດຕໍ່ສາຍຕາຂອງທຸກໆຄົນ.
20 ພຣະອົງຊົງເຊື່ອງພວກເຂົາໄວ້ໃນບ່ອນປອດໄພທີ່ພຣະພັກຂອງພຣະອົງ
ໃຫ້ພົ້ນຈາກຜູ້ທີ່ວາງແຜນອຸບາຍປອງຮ້າຍພວກເຂົາ
ພຣະອົງຊົງເຊື່ອງພວກເຂົາໄວ້ໃນບ່ອນພັກອາໄສທີ່ປອດໄພ
ເພື່ອໃຫ້ພົ້ນຈາກຄຳໝິ່ນປະໝາດຂອງພວກສັດຕູຂອງພວກເຂົາ.
21 ສັນລະເສີນ ພຣະເຈົ້າ
ເພາະຊົງສະແດງໃຫ້ເຫັນຢ່າງອັດສະຈັນ
ຄວາມຮັກໝັ້ນຄົງຂອງພຣະອົງ
ເມື່ອເມືອງຖືກປິດລ້ອມໂດຍສັດຕູ!
22 ຂ້ານ້ອຍຄິດຢ້ານພຣະອົງໄລ່ໃຫ້ໜີໄປຈາກພຣະອົງ
ແຕ່ພຣະອົງໄດ້ຍິນຄຳຮ້ອງຂໍໃຫ້ຊ່ອຍເຫລືອແລ້ວ.

23 ທຸກຄົນທີ່ໄວ້ວາງໃຈໃນ ພຣະຜູ້ເປັນເຈົ້າ ຈົ່ງຮັກພຣະອົງ
ພຣະອົງຊົງຄຸ້ມຄອງຜູ້ທີ່ມີຄວາມໄວ້ວາງໃຈ
ແຕ່ວ່າພຣະອົງຈະຊົງລົງໂທດຢ່າງໜັກແກ່ຜູ້ທີ່ຈອງຫອງ.
24 ທຸກຄົນທີ່ມີຄວາມຫວັງຢູ່ໃນ ພຣະຜູ້ເປັນເຈົ້າ
ຈົ່ງມີກຳລັງໃຈ ແລະກ້າຫານເທີ້ນ.

# ບົດທີ 32

## ການຍອມຜິດ ແລະການໃຫ້ອະໄພ

1 ຄວາມສຸກເປັນຂອງຜູ້ທີ່ໄດ້ຮັບການໃຫ້ອະໄພ
ແລະຜູ້ທີ່ໄດ້ຮັບການຍົກໂທດ.

2 ຄວາມສຸກເປັນຂອງຜູ້ທີ່ພຣະຜູ້ເປັນເຈົ້າບໍ່ໄດ້ຕໍ່ວ່າການກະທຳຜິດຂອງຕົນ
ແລະຜູ້ບໍ່ມີກົນອຸບາຍຫລອກລວງຄົນອື່ນ.

3 ເມື່ອຂ້ານ້ອຍບໍ່ສາລະພາບຄວາມຜິດ
ຂ້ານ້ອຍກໍໄດ້ຮັບທຸກຈົນຮ້ອງໄຫ້ຕະຫລອດມື້.
4 ຂ້າແດ່ພຣະຜູ້ເປັນເຈົ້າພຣະອົງຊົງລົງໂທດຂ້ານ້ອຍ
ທັງກາງເວັນ ແລະກາງຄືນ
ກຳລັງຂອງຂ້ານ້ອຍອ່ອນແຮງລົງ
ເໝືອນດັ່ງຄວາມປຽກຊຸ່ມທີ່ແຫ້ງລົງໃນລະດູຮ້ອນ.

*ເຊລາ*

5 ແຕ່ເມື່ອຂ້ານ້ອຍຍອມຮັບຜິດຕໍ່ພຣະອົງ
ໂດຍບໍ່ໄດ້ປົກປິດຫຍັງໄວ້
ຂ້ານ້ອຍສາລະພາບທຸກຢ່າງ
ແລ້ວພຣະອົງກໍຊົງອະໄພໃນການລ່ວງລະເມີດຂອງຂ້ານ້ອຍ.

*ເຊລາ*

6 ດັ່ງນັ້ນ ຜູ້ທີ່ຈົງຮັກພັກດີຕໍ່ພຣະອົງຕ້ອງອ້ອນວອນຮ້ອງຫາພຣະອົງ
ໃນຍາມລຳບາກ
ເມື່ອນໍ້າຫລາຍຂຶ້ນ ມັນຈະບໍ່ຖ້ວມໄປເຖິງພວກເຂົາ.
7 ພຣະອົງຊົງເປັນບ່ອນຫລົບລີ້ຂອງຂ້ານ້ອຍ
ພຣະອົງຈະຊົງຊ່ອຍຂ້ານ້ອຍໃຫ້ພົ້ນຈາກຄວາມທຸກຍາກລຳບາກ
ຂ້ານ້ອຍຮ້ອງເພງດ້ວຍສຽງດັງໃນການທີ່ພຣະອົງໄດ້ຊົງຊ່ອຍໃຫ້ພົ້ນໄພ
ເພາະວ່າພຣະອົງຊົງຄຸ້ມຄອງຂ້ານ້ອຍໄວ້.

*ເຊລາ*

8 ພຣະຜູ້ເປັນເຈົ້າຊົງກ່າວວ່າ, ເຮົາຈະສອນໃຫ້ເຈົ້າຮູ້ຈັກທາງ
ທີ່ເຈົ້າຈະຕ້ອງໄປ
ເຮົາຈະໃຫ້ເຈົ້າຮຽນຮູ້ແລະເຮົາຈະຕັກເຕືອນເຈົ້າ.
9 ຢ່າດື້ດ້ານດັ່ງມ້າ ຫລືລໍ
ທີ່ບໍ່ຍອມຟັງຄວາມ
ຖ້າບໍ່ເອົາເຊືອກຜູກປາກຂອງມັນ.

10 ຄົນຊົ່ວຮ້າຍຈະໄດ້ຮັບຄວາມທຸກທໍລະມານ
ແຕ່ຜູ້ທີ່ເຊື່ອພຣະຜູ້ເປັນເຈົ້າ
ຈະໄດ້ຮັບການຄຸ້ມຄອງດ້ວຍຄວາມຮັກອັນໝັ້ນຄົງຂອງພຣະອົງ.
11 ສ່ວນຜູ້ທີ່ຊອບທຳທຸກຄົນຈົ່ງຊົມຊື່ນຍິນດີ
ໃນສິ່ງທີ່ພຣະອົງຊົງກະທຳ

ແລະທຸກຄົນທີ່ມີຈິດໃຈຊື່ຕົງ ຈົ່ງໂຮຮ້ອງຍິນດີ.

# ບົດທີ 33

## ເພງສັນລະເສີນ

1 ທຸກຄົນທີ່ເປັນຄົນຊອບທຳ
ຈົ່ງຍິນດີໃນສິ່ງທີ່ພຣະຜູ້ເປັນເຈົ້າຊົງກະທຳ
ແລະທຸກຄົນທີ່ມີຈິດໃຈຊື່ຕົງ ຈົ່ງສັນລະເສີນພຣະອົງ.
2 ຈົ່ງຖວາຍການຂອບພຣະຄຸນແດ່ພຣະອົງດ້ວຍການດີດພິນ
ຈົ່ງຮ້ອງເພງຖວາຍແກ່ພຣະອົງດ້ວຍເຄື່ອງດົນດີນັ້ນ.
3 ຈົ່ງຮ້ອງເພງບົດໃໝ່ຖວາຍແດ່ພຣະອົງ
ດ້ວຍການດີດພິນຢ່າງມ່ວນຊື່ນ ແລະຮ້ອງເພງດ້ວຍສຽງດັງ.

4 ພຣະວາຈາຂອງພຣະຜູ້ເປັນເຈົ້າຊົງເປັນຈິງ
ແລະກິດຈະການທຸກຢ່າງຂອງພຣະອົງຊົງເປັນທີ່ໄວ້ວາງໃຈໄດ້.
5 ພຣະຜູ້ເປັນເຈົ້າຊົງຮັກຄວາມຊອບທຳ ແລະຄວາມສັດຊື່
ຄວາມຮັກອັນໝັ້ນຄົງຂອງພຣະອົງຊົງເຕັມທົ່ວໄປໃນແຜ່ນດິນໂລກ.

6 ພຣະຜູ້ເປັນເຈົ້າຊົງສ້າງສະຫວັນຊັ້ນຟ້າດ້ວຍພຣະດຳລັດຂອງພຣະອົງ
ພຣະອົງຊົງສ້າງຕາເວັນ ເດືອນແລະດາວດ້ວຍພຣະວາຈາຂອງພຣະອົງ.
7 ພຣະອົງຊົງທ້ອນໂຮມເອົານ້ຳທະເລທັງໝົດໄວ້ໃນບ່ອນດຽວ
ພຣະອົງຊົງຂັງມະຫາສະໝຸດອັນເລິກໄວ້ໃນບ່ອນຂອງມັນ.
8 ທົ່ວທັງແຜ່ນດິນໂລກຈົ່ງຢຳເກງພຣະຜູ້ເປັນເຈົ້າ
ທຸກໆຄົນທີ່ຢູ່ໃນໂລກຈົ່ງຢ້ານຢຳເກງພຣະອົງ.
9 ເມື່ອພຣະອົງຊົງສັ່ງ ໂລກນີ້ກໍເກີດຂຶ້ນມາ
ແລະທຸກໆສິ່ງປະກົດຂຶ້ນມາຕາມພຣະດຳລັດຂອງພຣະອົງ.

10 ພຣະຜູ້ເປັນເຈົ້າຊົງທຳລາຍຈຸດປະສົງຂອງຊົນຊາດຕ່າງໆ
ພຣະອົງຊົງໃຫ້ແຜນການຂອງພວກເຂົາໄຮ້ປະໂຫຍດ.
11 ແຕ່ສ່ວນແຜນການຂອງພຣະອົງນັ້ນຊົງໝັ້ນຄົງຕະຫລອດໄປ
ແລະຄວາມປາດຖະໜາດີຂອງພຣະອົງຊົງເປັນຢູ່ຊົ່ວນິດລັນດອນ.
12 ຄວາມສຸກຈົ່ງມີແກ່ຊົນຊາດທີ່ພຣະຜູ້ເປັນເຈົ້າເປັນພຣະເຈົ້າຂອງພວກເຂົາ
ແລະຜູ້ທີ່ພຣະອົງຊົງເລືອກໄວ້ໃຫ້ເປັນພວກຂອງພຣະອົງ.

13 ພຣະຜູ້ເປັນເຈົ້າຊົງທອດພຣະເນດລົງຈາກສະຫວັນຊັ້ນຟ້າ
ແລະຊົງເຫັນມະນຸດທຸກຄົນ.
14 ຢູ່ທີ່ນັ້ນ ພຣະອົງຊົງປົກຄອງ ແລະເບິ່ງແຍງທຸກໆຄົນ

ທີ່ຢູ່ເທິງແຜ່ນດິນໂລກ.
15 ພຣະອົງຊົງປະກອບຄວາມນຶກຄິດທັງຫລາຍຂອງພວກເຂົາ
ແລະຊົງຮູ້ຈັກທຸກໆສິ່ງທີ່ພວກເຂົາເຮັດ.
16 ເຈົ້າຊີວິດບໍ່ສາມາດຊະນະດ້ວຍກຳລັງທະຫານໄດ້
ແລະທະຫານກໍບໍ່ສາມາດຊະນະຍ້ອນກຳລັງຂອງຕົນໄດ້.
17 ມ້າເສິກໃຊ້ເອົາໄຊຊະນະໃນການຮົບບໍ່ໄດ້
ກຳລັງອັນແຮງກ້າຂອງມັນກໍຊ່ອຍໃຫ້ພົ້ນບໍ່ໄດ້.

18 ພຣະຜູ້ເປັນເຈົ້າຄອຍເຝົ້າເບິ່ງແຍງຜູ້ທີ່ຢຳເກງພຣະອົງ
ແລະຜູ້ທີ່ເຊື່ອໃນຄວາມຮັກອັນໝັ້ນຄົງຂອງພຣະອົງ.
19 ພຣະອົງຊົງຊ່ອຍພວກເຂົາໃຫ້ພົ້ນຈາກຄວາມຕາຍ
ແລະຊົງຄຸ້ມຄອງໃຫ້ພວກເຂົາມີຊີວິດຢູ່ຕໍ່ໄປໃນເວລາອຶດຢາກ.

20 ພວກຂ້ານ້ອຍຂໍຝາກຄວາມຫວັງໄວ້ກັບ ພຣະຜູ້ເປັນເຈົ້າ
ພຣະອົງຊົງເປັນຜູ້ຊ່ອຍເຫລືອ ແລະຜູ້ປົກປັກຮັກສາພວກຂ້ານ້ອຍ.
21 ພວກຂ້ານ້ອຍຍິນດີນຳພຣະອົງ
ແລະເຊື່ອໄວ້ວາງໃຈໃນພຣະນາມອັນບໍລິສຸດຂອງພຣະອົງ.
22 ຂ້າແດ່ພຣະຜູ້ເປັນເຈົ້າຂໍໃຫ້ຄວາມຮັກອັນໝັ້ນຄົງຂອງພຣະອົງ
ຊົງສະຖິດຢູ່ກັບພວກຂ້ານ້ອຍ
ຜູ້ໄດ້ຝາກຄວາມຫວັງໄວ້ກັບພຣະອົງ.

# ບົດທີ 34

## ການສັນລະເສີນຄວາມດີຂອງພຣະເຈົ້າ

1 ຂ້ານ້ອຍຈະຂອບພຣະຄຸນ ພຣະຜູ້ເປັນເຈົ້າທຸກເວລາ
ຂ້ານ້ອຍຈະບໍ່ເຊົາສັນລະເສີນພຣະອົງຈັກເທື່ອ.
2 ຂ້ານ້ອຍຈະສັນລະເສີນໃນສິ່ງທີ່ພຣະອົງຊົງກະທຳ
ຂໍໃຫ້ທຸກໆຄົນທີ່ຖືກຂົ່ມເຫັງຟັງເອົາ ແລະຍິນດີ.
3 ຈົ່ງພາກັນປະກາດຄວາມຍິ່ງໃຫຍ່ຂອງ ພຣະຜູ້ເປັນເຈົ້າ
ຂໍໃຫ້ພວກເຮົາພ້ອມກັນສັນລະເສີນພຣະນາມຂອງພຣະອົງ.

4 ຂ້ານ້ອຍໄດ້ອ້ອນວອນຫາ ພຣະຜູ້ເປັນເຈົ້າ ແລະພຣະອົງຊົງຕອບຂ້ານ້ອຍ
ພຣະອົງຊົງໃຫ້ຄວາມຢ້ານກົວຂອງຂ້ານ້ອຍໝົດໄປ.
5 ຜູ້ທີ່ຖືກຂົ່ມເຫັງໄດ້ມາເບິ່ງພຣະອົງ ແລະຍິນດີ
ພວກເຂົາຈະບໍ່ສູນເສຍຄວາມຫວັງຈັກເທື່ອ.
6 ຜູ້ທີ່ຕ້ອງການຄວາມຊ່ອຍເຫລືອຮ້ອງຫາພຣະອົງ ພຣະອົງຊົງຊ່ອຍລາວ

ພຣະອົງຊົງຊ່ອຍລາວໃຫ້ພົ້ນຈາກຄວາມທຸກລຳບາກນາໆປະການ.
7 ທູດຂອງ ພຣະຜູ້ເປັນເຈົ້າ ໄດ້ຮັກສາຜູ້ທີ່ຢຳເກງພຣະອົງ
ແລະຊ່ອຍຊີວິດຂອງລາວໃຫ້ພົ້ນຈາກອັນຕະລາຍ.

8 ພວກທ່ານຈະພົບດ້ວຍຕົນເອງວ່າ ພຣະຜູ້ເປັນເຈົ້າ ຊົງດີພຽງໃດ
ຄວາມສຸກເປັນຂອງຜູ້ທີ່ສະແຫວງຫາຄວາມປອດໄພໃນພຣະອົງ.
9 ໄພ່ພົນທຸກຄົນຂອງ ພຣະຜູ້ເປັນເຈົ້າ ຈົ່ງຢຳເກງພຣະອົງ
ຜູ້ທີ່ຢຳເກງພຣະອົງຈະໄດ້ຮັບທຸກສິ່ງຕາມທີ່ຕົນຕ້ອງການ.
10 ແມ່ນແຕ່ຝູງສິງກໍຍັງຂາດອາຫານ ແລະອຶດຫິວ
ແຕ່ວ່າຜູ້ທີ່ເຊື່ອຟັງ ພຣະຜູ້ເປັນເຈົ້າ ຈະບໍ່ຂາດສິ່ງທີ່ດີເລີຍ.
11 ພວກລູກຫລານຂອງຂ້ານ້ອຍເອີຍ ຈົ່ງມານີ້ ແລະຟັງຂ້ານ້ອຍເທີ້ນ
ຂ້ານ້ອຍຈະສອນໃຫ້ພວກເຂົາຢຳເກງ ພຣະຜູ້ເປັນເຈົ້າ.
12 ພວກເຈົ້າມັກຊີວິດມ່ວນຊື່ນແມ່ນບໍ?
ພວກເຈົ້າປາດຖະໜາຊີວິດຍືນຍາວ ແລະຄວາມສຸກບໍ່ແມ່ນບໍ?
13 ຖ້າຢ່າງນັ້ນ ຢ່າເວົ້າຄວາມຊົ່ວຊ້າ ແລະເວົ້າຕົວະ.
14 ຈົ່ງຫັນຫລັງໃຫ້ຄວາມຊົ່ວຊ້າ ແລະສ້າງແຕ່ຄວາມດີ
ຖ້າຕ້ອງການສິ່ງເຫລົ່ານີ້ ຈົ່ງປາດຖະໜາຫາແຕ່ຄວາມສະຫງົບສຸກ
ແລະສ້າງແຕ່ຄວາມດີຂຶ້ນ.

15 ພຣະຜູ້ເປັນເຈົ້າ ຊົງຄອຍເຝົ້າເບິ່ງແຍງຄົນຊອບທຳ
ແລະຊົງຟັງສຽງຮ້ອງຂໍຂອງພວກເຂົາ.
16 ແຕ່ພຣະອົງຊົງຫັນໜ້າໜີຈາກຜູ້ທີ່ເຮັດຊົ່ວ
ດັ່ງນັ້ນ ແມ່ນແຕ່ພວກປະຊາຊົນຂອງລາວກໍຈະລືມລາວໄປ.
17 ເມື່ອຄົນຊອບທຳຮ້ອງຫາ ພຣະຜູ້ເປັນເຈົ້າ ພຣະອົງຊົງຟັງລາວ
ພຣະອົງຊົງຊ່ອຍຊີວິດລາວໃຫ້ພົ້ນຈາກຄວາມທຸກລຳບາກ.
18 ພຣະຜູ້ເປັນເຈົ້າ ຊົງສະຖິດຢູ່ໃກ້ຜູ້ທີ່ຂາດຄວາມກ້າຫານ
ແລະພຣະອົງຊົງຊ່ອຍຜູ້ທີ່ສູນເສຍຄວາມຫວັງທຸກຢ່າງ.

19 ຄົນດີທົນທຸກທໍລະມານຕໍ່ຄວາມຍາກລຳບາກຢ່າງຫລວງຫລາຍ
ແຕ່ ພຣະຜູ້ເປັນເຈົ້າ ຊົງຊ່ອຍລາວໃຫ້ພົ້ນຈາກສິ່ງເຫລົ່ານີ້.
20 ພຣະອົງຊົງຄຸ້ມຄອງລາວໄວ້ທຸກຢ່າງ
ແມ່ນແຕ່ກະດູກຊີກໜຶ່ງຂອງລາວກໍຈະບໍ່ຫັກແຕກໄປ.
21 ຄວາມຊົ່ວຈະເຮັດໃຫ້ຄົນຊົ່ວຊ້າຕາຍໄປ
ຄົນທີ່ກຽດຊັງຄົນຊອບທຳຈະຖືກໂທດ.
22 ພຣະຜູ້ເປັນເຈົ້າ ຊົງຊ່ອຍຜູ້ຮັບໃຊ້ຂອງພຣະອົງໃຫ້ພົ້ນໄພ

ຜູ້ທີ່ຢູ່ໃນຄວາມຄຸ້ມຄອງຂອງພຣະອົງຈະພົ້ນໄພ.

# ບົດທີ 35

## ດາວິດທູນຂໍຄວາມປອດໄພ

*ເພງສັນລະເສີນຂອງດາວິດ*

1 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຕ້ານທານຜູ້ທີ່ຕ້ານທານຂ້ານ້ອຍ
ຂໍສູ້ຮົບຜູ້ທີ່ຮົບກັບຂ້ານ້ອຍ
2 ຂໍຖືໂລ່ ແລະເສື້ອຫຸ້ມເກາະ ແລະລຸກຂຶ້ນຊ່ວຍຂ້ານ້ອຍ
3 ຂໍຕຽມຫອກ ແລະຂວານ ສູ້ຜູ້ຂົ່ມເຫັງຂ້ານ້ອຍ
ຂໍກ່າວກັບຈິດໃຈຂອງຂ້ານ້ອຍວ່າ
"ເຮົາເປັນຜູ້ຊ່ວຍໃຫ້ລອດພົ້ນຂອງເຈົ້າ"

4 ຜູ້ທີ່ສະແຫວງຫາຊີວິດຂອງຂ້ານ້ອຍນັ້ນ
ຂໍໃຫ້ພວກເຂົາໄດ້ອັບອາຍ ແລະເສື່ອມເສຍກຽດ
ຜູ້ທີ່ປະດິດຄວາມຊົ່ວຕໍ່ສູ້ຂ້ານ້ອຍນັ້ນ ຂໍໃຫ້ພວກເຂົາກັບໄປແລະໄຮ້ກຽດ
5 ຂໍໃຫ້ພວກເຂົາເປັນເໝືອນແກບຕໍ່ໜ້າລົມ
ແລະຂໍທູດຂອງພຣະຜູ້ເປັນເຈົ້າ ຂັບໄລ່ຕາມພວກເຂົາໄປ
6 ຂໍໃຫ້ທາງຂອງພວກເຂົາມືດ ແລະມື່ນ
ແລະຂໍໃຫ້ທູດຂອງພຣະຜູ້ເປັນເຈົ້າ ຂົ່ມເຫັງພວກເຂົາ
7 ເພາະພວກເຂົາເອົາແຮ້ວເຊື່ອງດັກຂ້ານ້ອຍໄວ້ຢ່າງບໍ່ມີເຫດ
ພວກເຂົາຂຸດຂຸມຫວັງເອົາຊີວິດຂ້ານ້ອຍຢ່າງບໍ່ມີເລື່ອງ
8 ຂໍໃຫ້ຄວາມຈິບຫາຍມາເຖິງລາວຢ່າງບໍ່ຮູ້ຕົວ
ແລະຂໍໃຫ້ແຮ້ວທີ່ລາວເຊື່ອງໄວ້ນັ້ນຕິດລາວເອງ
ແລະໃຫ້ລາວຕິດແຮ້ວຈິບຫາຍເອງ

9 ແລ້ວຈິດວິນຍານຂອງຂ້ານ້ອຍຈະຊົມຊື່ນຍິນດີໃນພຣະຜູ້ເປັນເຈົ້າ
ຍິນດີຢູ່ໃນການຊ່ວຍໃຫ້ລອດພົ້ນຂອງພຣະອົງ
10 ກະດູກທັງໝົດຂອງຂ້ານ້ອຍຈະກ່າວວ່າ "ຂ້າແດ່ພຣະຜູ້ເປັນເຈົ້າ
ມີຜູ້ໃດເໝືອນພຣະອົງ
ພຣະອົງຜູ້ຊ່ວຍຄົນຍາກຈົນໃຫ້ພົ້ນຈາກຜູ້ທີ່ເຂັ້ມແຂງເກີນກຳລັງຂອງລາວ
ຄົນຍາກຈົນ ແລະຄົນຂັດສົນຈາກຜູ້ທີ່ປຸ້ນລາວ"

11 ມີພະຍານບໍ່ຈິງລຸກຂຶ້ນ ພວກເຂົາຟ້ອງສິ່ງທີ່ຂ້ານ້ອຍບໍ່ຮູ້
12 ພວກເຂົາສະໜອງຂ້ານ້ອຍໂດຍເຮັດຊົ່ວຕອບແທນຄວາມດີ
ຈິດໃຈຂອງຂ້ານ້ອຍກໍໂສກເສົ້າ

13 ສ່ວນຂ້ານ້ອຍ ເມື່ອພວກເຂົາປ່ວຍ ຂ້ານ້ອຍສວມຜ້າກະສອບ
ຂ້ານ້ອຍຂົ່ມໃຈຕົນເອງດ້ວຍການອົດອາຫານ
ຂ້ານ້ອຍກົ້ມໜ້າລົງທີ່ເອິກອະທິຖານ
14 ຂ້ານ້ອຍປະພຶດເໝືອນຢ່າງພວກເຂົາເປັນເພື່ອນ ຫລືພີ່ນ້ອງຂອງຂ້ານ້ອຍ
ຂ້ານ້ອຍຄໍ້ຕົກ ແລະຮ້ອງໄຫ້ເໝືອນຄົນໄວ້ທຸກໃຫ້ແມ່

15 ແຕ່ເມື່ອຂ້ານ້ອຍສະດຸດ ພວກເຂົາກໍຊຸມນຸມກັນຢ່າງຖືກໃຈ
ນັກເລງລວບລວມກັນມາສູ້ກັບຂ້ານ້ອຍ ຂ້ານ້ອຍຍັງບໍ່ຮູ້
ແຕ່ພວກເຂົາໄດ້ດ່າວ່າຂ້ານ້ອຍຢ່າງບໍ່ຢຸດຢັ້ງ
16 ພວກເຂົາເຍາະເຍີ້ຍຢ່າງຄົນໜ້າຊື່ໃຈຄົດໃນການລ້ຽງຕ່າງໆ
ກັດແຂ້ວໃສ່ຂ້ານ້ອຍ

17 ຂ້າແດ່ອົງພຣະຜູ້ເປັນເຈົ້າພຣະອົງຈະບໍ່ທອດພຣະເນດອີກດົນເທົ່າໃດ
ຂໍຊ່ວຍຈິດວິນຍານຂ້ານ້ອຍໃຫ້ພົ້ນຈາກຄວາມໂຫດຮ້າຍຂອງພວກເຂົາ
ຊ່ວຍຊີວິດຂ້ານ້ອຍຈາກໝູ່ສິງໃຫຍ່
18 ແລ້ວຂ້ານ້ອຍຈະໂມທະນາພຣະຄຸນພຣະອົງໃນທີ່ຊຸມນຸມໃຫຍ່
ຂ້ານ້ອຍຈະສັນລະເສີນພຣະອົງທ່າມກາງຄົນເປັນຈຳນວນຫລາຍ
19 ຂໍຢ່າໃຫ້ຄູ່ແຂ່ງຜູ້ຂາດເຫດຜົນນັ້ນມີຄວາມຊົມຊື່ນຍິນດີເໜືອຂ້ານ້ອຍ
ແລະຢ່າໃຫ້ບັນດາຜູ້ທີ່ກຽດຊັງຂ້ານ້ອຍຢ່າງບໍ່ມີເຫດໄດ້ຍິກຄິ້ວລິ່ວຕາໃຫ້ກັນ
20 ເພາະພວກເຂົາບໍ່ເວົ້າຢ່າງສັນຕິ
ແຕ່ພວກເຂົາຄິດຖ້ອຍຄຳຕົວະຕໍ່ບັນດາຜູ້ທີ່ສະຫງົບງຽບໃນແຜ່ນດິນ
21 ພວກເຂົາອ້າປາກກວ້າງໃສ່ຂ້ານ້ອຍ ພວກເຂົາກ່າວວ່າ "ວ່າຈັ່ງໃດ ວ່າຈັ່ງໃດ
ເຮົາເຫັນກັບຕາແລ້ວ"

## ດາວິດທູນຂໍໃຫ້ພຣະເຈົ້າຕໍ່ສູ້ກັບພວກສັດຕູຂອງເພິ່ນ

22 ຂ້າແດ່ພຣະຜູ້ເປັນເຈົ້າພຣະອົງທອດພຣະເນດແລ້ວ ຂໍຢ່າຢູ່ເສີຍ
ຂ້າແດ່ອົງພຣະຜູ້ເປັນເຈົ້າຂໍຢ່າສະຖິດໄກຈາກຂ້ານ້ອຍ
23 ຂ້າແດ່ພຣະເຈົ້າຂອງຂ້ານ້ອຍ ອົງພຣະຜູ້ເປັນເຈົ້າຂອງຂ້ານ້ອຍ
ຂໍຮ້ອນພຣະໄທ ຕື່ນຂຶ້ນເພື່ອເຫັນແກ່ສິດທິຂອງຂ້ານ້ອຍ
ເພື່ອເຫັນແກ່ເລື່ອງຂອງຂ້ານ້ອຍເຖີດ
24 ຂ້າແດ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງຂ້ານ້ອຍ
ຂໍໃຫ້ຄວາມຍຸດຕິທຳແກ່ຂ້ານ້ອຍຕາມຄວາມຊອບທຳຂອງພຣະອົງ
ແລະຂໍຢ່າໃຫ້ພວກເຂົາຊົມຊື່ນຍິນດີເໜືອຂ້ານ້ອຍ
25 ຢ່າໃຫ້ພວກເຂົາທັງຫລາຍຄິດໃນໃຈວ່າ
"ເອີ້ ເຮົາໄດ້ຕາມໃຈປາດຖະໜາຂອງເຮົາ"

ຢ່າໃຫ້ພວກເຂົາກ່າວໄດ້ວ່າ
"ເຮົາໄດ້ກືນລາວແລ້ວ"
26 ຂໍໃຫ້ພວກເຂົາໄດ້ອັບອາຍ ແລະໄດ້ຄວາມຫຍຸ້ງຍາກນຳກັນ
ຄືຜູ້ຊົມຊື່ນຍິນດີ ເພາະຄວາມລຳບາກຂອງຂ້ານ້ອຍ
ໃຫ້ພວກເຂົາໄດ້ຫົ່ມຄວາມອັບອາຍ ແລະເສື່ອມເສຍກຽດ
ຄືຜູ້ທີ່ອວດຕົວສູ້ຂ້ານ້ອຍ

27 ຂໍໃຫ້ບັນດາຜູ້ທີ່ເຫັນດີໃນເຫດອັນຊອບທຳຂອງຂ້ານ້ອຍໂຫ່ຮ້ອງ
ແລະຍິນດີ ແລະກ່າວຢູ່ສະເໝີວ່າ "ຂໍໃຫ້ພຣະຜູ້ເປັນເຈົ້ານັ້ນຍິ່ງໃຫຍ່
ພຣະອົງຜູ້ປິຕິຍິນດີໃນຄວາມຈະເລີນຂອງຜູ້ຮັບໃຊ້ຂອງພຣະອົງ"
28 ແລ້ວລີ້ນຂອງຂ້ານ້ອຍຈະບອກເຖິງຄວາມຊອບທຳຂອງພຣະອົງ
ແລະຈະສັນລະເສີນພຣະອົງແຕ່ເຊົ້າຈົນຄໍ່າ

# ບົດທີ 36

## ພາບຂອງຄົນອະທຳ

*ເຖິງຫົວໜ້ານັກຮ້ອງ ເພງສັນລະເສີນຂອງດາວິດ ຜູ້ຮັບໃຊ້ຂອງພຣະຜູ້ເປັນເຈົ້າ*

1 ການລະເມີດຂອງຄົນຊົ່ວເລິກເຂົ້າໄປໃນໃຈຂອງຂ້ານ້ອຍວ່າ
"ໃນແວວຕາຂອງລາວບໍ່ມີຄວາມຢຳເກງພຣະເຈົ້າ"
2 ເພາະລາວຍ້ອງຍໍຕົນເອງໃນສາຍຕາຂອງຕົນຈົນໄດ້ພົບວ່າຄວາມຊົ່ວຊ້າ
ຂອງລາວເປັນສິ່ງທີ່ໜ້າລັງກຽດ
3 ຖ້ອຍຄຳຈາກປາກຂອງລາວກໍຊົ່ວຊ້າ ແລະຫລອກລວງ
ລາວຢຸດທີ່ຈະປະພຶດຢ່າງສະຫລາດ ແລະກະທຳຄວາມດີ
4 ລາວຄິດຄວາມຊົ່ວຮ້າຍເມື່ອລາວຢູ່ເທິງຕຽງນອນຂອງລາວ
ລາວວາງຕົວໃນທາງທີ່ບໍ່ດີ ລາວບໍ່ໄດ້ກຽດຊັງຄວາມຊົ່ວ

5 ຂ້າແດ່ພຣະຜູ້ເປັນເຈົ້າຄວາມເມດຕາຂອງພຣະອົງຢູ່ໃນຟ້າສະຫວັນ
ຄວາມສັດຊື່ຂອງພຣະອົງໄປເຖິງເມກ
6 ຄວາມຊອບທຳຂອງພຣະອົງເໝືອນພູເຂົາໃຫຍ່ທັງຫລາຍ
ຄຳຕັດສິນຂອງພຣະອົງເໝືອນບ່ອນເລິກ ຂ້າແດ່ພຣະຜູ້ເປັນເຈົ້າ
ພຣະອົງຊ່ວຍມະນຸດ ແລະສັດໃຫ້ລອດພົ້ນ
7 ຂ້າແດ່ພຣະເຈົ້າຄວາມເມດຕາຂອງພຣະອົງປະເສີດຈັກເທົ່າໃດ
ບຸດທັງຫລາຍຂອງມະນຸດເຂົ້າລີ້ໄພຢູ່ໃຕ້ຮົ່ມປີກຂອງພຣະອົງ
8 ພວກເຂົາອີ່ມດ້ວຍຄວາມອຸດົມສົມບູນແຫ່ງພຣະວິຫານຂອງພຣະອົງ
ແລະພຣະອົງຈະປະທານໃຫ້ພວກເຂົາດື່ມ
ຈາກແມ່ນໍ້າແຫ່ງຄວາມສຸກສຳລານຂອງພຣະອົງ

9 ເພາະລຳນ້ຳພຸແຫ່ງຊີວິດຢູ່ກັບພຣະອົງ
ເຮົາຈະເຫັນຄວາມສະຫວ່າງໂດຍຄວາມສະຫວ່າງຂອງພຣະອົງ

## ການທູນຂໍພຣະພອນຈາກພຣະເຈົ້າ

10 ຂໍປະທານຄວາມເມດຕາຂອງພຣະອົງຕໍ່ໄປແກ່ຜູ້ທີ່ຮູ້ຈັກພຣະອົງ
ແລະຄວາມຊອບທຳຂອງພຣະອົງແກ່ຄົນໃຈທ່ຽງທຳ
11 ຂໍຢ່າໃຫ້ຕີນຂອງຄົນຈອງຫອງມາເໜືອຂ້ານ້ອຍ
ຫລືໃຫ້ມືຂອງຄົນຊົ່ວຂັບໄລ່ຂ້ານ້ອຍໄປ
12 ແລ້ວຄົນກະທຳຄວາມຊົ່ວຊ້າກໍລົ້ມຢູ່ບ່ອນນັ້ນ
ພວກເຂົາຖືກຊຸກລົງ ລຸກຂຶ້ນອີກບໍ່ໄດ້

# ບົດທີ 37

## ໂຊກຊະຕາຂອງຄົນຊົ່ວ ແລະຄົນດີ

1 ຢ່າເສຍໃຈຍ້ອນຄົນຊົ່ວ.
ຢ່າອິດສາຜູ້ທີ່ໄດ້ມາໃນທາງຜິດ.
2 ພວກເຂົາຈະສູນເສຍໄປເໝືອນຫຍ້າທີ່ຫ່ຽວແຫ້ງລົງ
ພວກເຂົາຈະຕາຍເໝືອນດັ່ງຕົ້ນໄມ້ທີ່ຫ່ຽວແຫ້ງ.

3 ຈົ່ງເຊື່ອຟັງພຣະຜູ້ເປັນເຈົ້າ ແລະສ້າງແຕ່ຄວາມດີ
ແລ້ວອາໄສຢູ່ໃນປະເທດຂອງຕົນຢ່າງປອດໄພ.
4 ຈົ່ງຊອກຫາຄວາມສຸກໃນ ພຣະຜູ້ເປັນເຈົ້າ
ແລະພຣະອົງຈະປະທານໃຫ້ຕາມໃຈມັກຂອງເຈົ້າ.

5 ຈົ່ງຖວາຍຕົວເອງແດ່ ພຣະຜູ້ເປັນເຈົ້າ
ຈົ່ງເຊື່ອຟັງພຣະອົງ ແລະພຣະອົງຈະຊ່ອຍເຫລືອເຈົ້າ.
6 ພຣະອົງຈະຊົງກະທຳໃຫ້ຄວາມດີຂອງເຈົ້າຊ່າລືໄປ
ແລະຄວາມຊອບທຳຂອງເຈົ້າເປັນເໝືອນດັ່ງດວງຕາເວັນໃນຍາມທ່ຽງ.
7 ຈົ່ງຢູ່ຕໍ່ພຣະພັກຂອງ ພຣະຜູ້ເປັນເຈົ້າຢ່າງສະຫງົບງຽບ
ແລະຄອຍຖ້າກິດຈະການຂອງພຣະອົງດ້ວຍຄວາມອົດທົນ
ຢ່າຄິດໜັກໃຈກ່ຽວກັບຜູ້ມັ່ງຄັ່ງສົມບູນ
ຫລືຜູ້ທີ່ສຳເລັດຜົນໃນແຜນການຊົ່ວຂອງລາວ.

8 ຢ່າໃຈຮ້າຍ ຢ່າວຸ້ນວາຍ ແລະຢ່າເສຍໃຈ
ເພາະສິ່ງເຫລົ່ານີ້ບໍ່ໄດ້ເຮັດໃຫ້ເຈົ້າດີຂຶ້ນຢ່າງໃດໝົດ.
9 ສ່ວນຜູ້ທີ່ເຊື່ອພຣະຜູ້ເປັນເຈົ້າຈະຢູ່ໃນພື້ນແຜ່ນດິນຢ່າງປອດໄພ
ແຕ່ຄົນຊົ່ວຈະຖືກຂັບໄລ່ໜີ.

10 ໃນພຽງຊົ່ວໄລຍະດຽວເທົ່ານັ້ນແຫລະ ຄົນຊົ່ວຮ້າຍຈະດັບສູນໄປ
  ພວກເຈົ້າຈະຊອກຫາລາວແຕ່ຈະບໍ່ພົບ.
11 ແຕ່ຜູ້ທີ່ອ່ອນໂຍນຈະຢູ່ໃນແຜ່ນດິນຢ່າງປອດໄພ
  ແລະເຕັມໄປດ້ວຍຄວາມສະຫງົບສຸກ.

12 ຄົນຊົ່ວວາງແຜນອຸບາຍຕໍ່ສູ້ຄົນດີ
  ແລະກັດແຂ້ວໃສ່ລາວ.
13 ພຣະຜູ້ເປັນເຈົ້າຊົງຫົວຂວັນພວກຄົນຊົ່ວຮ້າຍ
  ເພາະພຣະອົງຊົງຮູ້ຈັກວ່າໃນບໍ່ດົນນີ້ ພວກເຂົາຈະຖືກທຳລາຍ.

14 ພວກຄົນຊົ່ວຮ້າຍຖອດດາບຂອງຕົນອອກ ແລະກົ່ງຄັນທະນູ
  ເພື່ອຂ້າຄົນທຸກຍາກ ແລະຂັດສົນຖິ້ມ
 ແລະຂ້າພວກຄົນດີທັງຫລາຍໂດຍວິທີປາດຄໍ.
15 ແຕ່ວ່າພວກເຂົາຈະຖືກທຳລາຍດ້ວຍດາບຂອງພວກເຂົາເອງ
  ແລະຄັນທະນູຂອງພວກເຂົາຈະຫັກ.

16 ສິ່ງຂອງເລັກນ້ອຍທີ່ຄົນດີມີຢູ່
  ກໍດີກວ່າຊັບສົມບັດຂອງຄົນຊົ່ວທັງຫລາຍ.
17 ເພາະວ່າພຣະຜູ້ເປັນເຈົ້າຈະໃຫ້ກຳລັງຂອງຄົນຊົ່ວຮ້າຍສູນເສຍໄປ
  ແຕ່ພຣະອົງຈະຊົງຄໍ້າຊູຄົນດີ.

18 ພຣະຜູ້ເປັນເຈົ້າຊົງພິທັກຮັກສາຜູ້ທີ່ສັດຊື່ຕໍ່ພຣະອົງ
  ແລະພື້ນແຜ່ນດິນຈະເປັນຂອງພວກເຂົາຕະຫລອດໄປ.
19 ພວກເຂົາຈະບໍ່ທົນທຸກທໍລະມານໃນຍາມເຄາະຮ້າຍ
  ພວກເຂົາຈະມີພຽງພໍໃນຍາມອຶດຢາກ.

20 ແຕ່ວ່າພວກຄົນຊົ່ວຈະຕ້ອງຕາຍ
  ສັດຕູທັງຫລາຍຂອງພຣະຜູ້ເປັນເຈົ້າຈະດັບສູນໄປເໝືອນດອກໄມ້ປ່າ
 ພວກເຂົາຈະສູນຫາຍໄປເໝືອນດັ່ງຄວັນໄຟ.

21 ຄົນຊົ່ວຮ້າຍຂໍຢືມເງິນແຕ່ບໍ່ສົ່ງຄືນ
  ສ່ວນຄົນດີມີໃຈກວ້າງຂວາງ ແລະເອື້ອເຟື້ອເພື່ອແຜ່.
22 ຜູ້ທີ່ຮັບພຣະພອນຈາກພຣະຜູ້ເປັນເຈົ້າ
  ຈະອາໄສຢູ່ໃນພື້ນແຜ່ນດິນນີ້ຢ່າງປອດໄພ
 ແຕ່ວ່າຜູ້ທີ່ພຣະອົງຊົງສາບແຊ່ງຈະຖືກຂັບໄລ່ອອກໄປ.

23 ພຣະຜູ້ເປັນເຈົ້າຊົງນຳພາມະນຸດຢ່າງປອດໄພຕາມວິຖີທາງທີ່ລາວປະພຶດ
  ແລະພຣະອົງຊົງພໍພຣະໄທນຳຄວາມປະພຶດນັ້ນ.

24 ຖ້າວ່າລາວລົ້ມລົງ ລາວຈະບໍ່ຖືກຢຽບຢ່ຳ
ເພາະພຣະອົງຈະຊ່ວຍລາວໃຫ້ລຸກຂຶ້ນໄດ້.

25 ແຕ່ກ່ອນຂ້ານ້ອຍເປັນເດັກນ້ອຍ ດຽວນີ້ຂ້ານ້ອຍເຖົ້າແລ້ວ
ແຕ່ຂ້ານ້ອຍບໍ່ເຄີຍເຫັນວ່າ ພຣະຜູ້ເປັນເຈົ້າປະລະຄົນດີ
ຫລືໃຫ້ລູກທັງຫລາຍຂອງລາວຂໍທານກິນ.
26 ໃນຕະຫລອດເວລາ ຄົນດີໄດ້ໃຫ້ທານໄປລ້າໆ
ແລະເອົາເງິນໃຫ້ຄົນອື່ນຢືມ ລູກທັງຫລາຍຂອງລາວກໍໄດ້ຮັບພຣະພອນ.

27 ຈົ່ງຫັນຫລັງໃຫ້ຄວາມຊົ່ວ ແລະສ້າງແຕ່ຄວາມດີ
ແລະເຈົ້າຈະອາໄສຢູ່ໃນແຜ່ນດິນຕະຫລອດໄປ.
28 ເພາະວ່າ ພຣະຜູ້ເປັນເຈົ້າ ຊົງຮັກຄວາມຊອບທຳ
ພຣະອົງບໍ່ປະລະພວກທີ່ຈົ່ງຮັກພັກດີຕໍ່ພຣະອົງ
ພຣະອົງຊົງຄຸ້ມຄອງພວກເຂົາຕະຫລອດມາ
ແຕ່ວ່າເຊື້ອສາຍຂອງຄົນຊົ່ວຮ້າຍຈະຖືກຂັບໄລ່ໜີ.
29 ຄົນຊອບທຳຈະຢູ່ໃນພື້ນແຜ່ນດິນຢ່າງປອດໄພ
ແລະເປັນເຈົ້າຂອງດິນນັ້ນຕະຫລອດໄປ.

30 ຄຳເວົ້າຂອງຄົນດີເປັນຄຳເວົ້າສະຫລາດ
ລາວເວົ້າແຕ່ສິ່ງທີ່ຖືກຕ້ອງ.
31 ລາວຮັກສາພຣະທຳຂອງ ພຣະເຈົ້າ ໄວ້ໃນຈິດໃຈ
ໂດຍບໍ່ຍອມໃຫ້ເຫີນຫ່າງອອກໄປ.
32 ຄົນຊົ່ວຮ້າຍທັງຫລາຍພະຍາຍາມຄອຍເຝົ້າຂ້າຄົນດີ.
33 ແຕ່ວ່າ ພຣະຜູ້ເປັນເຈົ້າ ຈະບໍ່ຊົງປະລະໃຫ້ຄົນດີຕົກຢູ່ໃຕ້ອຳນາດຂອງສັດຕູ
ຫລືປ່ອຍໃຫ້ລາວຖືກໂທດເມື່ອຖືກສານຕັດສິນ.

34 ຈົ່ງມອບຄວາມຫວັງຂອງເຈົ້າໄວ້ກັບ ພຣະຜູ້ເປັນເຈົ້າ
ແລະເຊື່ອຟັງພຣະບັນຍັດຂອງພຣະອົງ
ພຣະອົງຈະປະທານເຫື່ອແຮງໃຫ້ເຈົ້າຢູ່ໃນພື້ນແຜ່ນດິນຢ່າງປອດໄພ
ແລະເຈົ້າຈະເຫັນວ່າພວກຄົນຊົ່ວຮ້າຍຖືກໄລ່ອອກໄປ.

35 ຂ້ານ້ອຍເຄີຍເຫັນຄົນຊົ່ວປົກຄອງແບບການຂົ່ມເຫັງ
ລາວຖືຕົວສູງດັ່ງຕົ້ນສົນທີ່ປະເທດ ເລບານອນ.
36 ແຕ່ຕໍ່ມາ ຂ້ານ້ອຍກາຍຜ່ານມາ ກໍບໍ່ເຫັນຄົນນັ້ນຢູ່ຫັ້ນ
ຂ້ານ້ອຍໄດ້ຊອກຫາລາວແຕ່ບໍ່ພົບ.

37 ຈົ່ງພິຈາລະນາເບິ່ງຄົນດີ ແລະຊອບທຳ

ເພາະວ່າມະນຸດທີ່ມີຄວາມສະຫງົບສຸກຈະມີເຊື້ອສາຍຫລາຍ.
38 ແຕ່ຄົນທີ່ເຮັດຜິດຕ້ອງຖືກທຳລາຍເປັນແນ່
ເຊື້ອສາຍຂອງພວກເຂົາຈະຖືກທຳລາຍໃຫ້ດັບສູນໄປ.
39 ພຣະຜູ້ເປັນເຈົ້າຊົງຊ່ອຍມະນຸດທີ່ຊອບທຳໃຫ້ພົ້ນໄພ
ແລະໃນເວລາທຸກລຳບາກ ພຣະອົງຊົງເປັນທີ່ເພິ່ງຂອງພວກເຂົາ.
40 ພຣະອົງຊົງຊ່ອຍເຫລືອພວກເຂົາ ແລະຊ່ອຍຊີວິດຂອງພວກເຂົາໄວ້
ທັງຊ່ອຍພວກເຂົາໃຫ້ພົ້ນຈາກຄົນຊົ່ວຮ້າຍ
ເພາະວ່າພວກເຂົາມາຂໍໃຫ້ພຣະອົງຄຸ້ມຄອງ.

# ບົດທີ 38

## ດາວິດທູນຂໍພຣະກະລຸນາຈາກພຣະເຈົ້າ

*ເພງສັນລະເສີນຂອງດາວິດ ເພື່ອການຖວາຍບູຊາລຳນຶກ*

1 ຂ້າແດ່ພຣະຜູ້ເປັນເຈົ້າຂໍຢ່າຊົງນາບຂູ່ຂ້ານ້ອຍ
ດ້ວຍຄວາມໂກດຮ້າຍຂອງພຣະອົງ
ຫລືຕີສອນຂ້ານ້ອຍດ້ວຍພຣະພິໂລດຂອງພຣະອົງ
2 ເພາະລູກທະນູຂອງພຣະອົງຈົມເຂົ້າໄປໃນຂ້ານ້ອຍ
ແລະພຣະຫັດຂອງພຣະອົງລົງມາເຖິງຫົວຂ້ານ້ອຍ

3 ເພາະພຣະພິໂລດຂອງພຣະອົງ ຈຶ່ງບໍ່ມີຄວາມປົກກະຕິ
ໃນເນື້ອໜັງຂອງຂ້ານ້ອຍ
ເພາະບາບຂອງຂ້ານ້ອຍຈຶ່ງບໍ່ມີອະນາໄມໃນກະດູກຂອງຂ້ານ້ອຍ
4 ເພາະຄວາມຊົ່ວຊ້າຂອງຂ້ານ້ອຍຖ້ວມຫົວ
ມັນໜັກເໝືອນພາລະ ຊຶ່ງໜັກເຫລືອກຳລັງຂ້ານ້ອຍ
5 ເພາະຄວາມໂງ່ຈ້າຂອງຂ້ານ້ອຍ ບາດແຜຂອງຂ້ານ້ອຍຈຶ່ງເໝັນ
ແລະເປື່ອຍເນົ່າ
6 ຂ້ານ້ອຍໜັກໃຈ ຂ້ານ້ອຍ ຈຶ່ງລົ້ມລົງ
ຂ້ານ້ອຍຍ່າງເປັນທຸກໄປແຕ່ເຊົ້າຮອດຄ່ຳ
7 ເພາະບັ້ນແອວຂອງຂ້ານ້ອຍເຕັມໄປດ້ວຍພະຍາດທີ່ໜ້າລັງກຽດ
ແລະບໍ່ມີຄວາມປົກກະຕິໃນເນື້ອໜັງຂອງຂ້ານ້ອຍ
8 ຂ້ານ້ອຍຊຸດໂຊມ ແລະບວມຊ້ຳ
ຂ້ານ້ອຍຄ່ຳຄວນ ເພາະໃຈຂ້ານ້ອຍບໍ່ສະຫງົບ

9 ຂ້າແດ່ອົງພຣະຜູ້ເປັນເຈົ້າຄວາມປາດຖະໜາທັງໝົດຂອງຂ້ານ້ອຍ
ກໍແຈ້ງຢູ່ຕໍ່ພຣະພັກພຣະອົງ
ການຖອນຫາຍໃຈຂອງຂ້ານ້ອຍກໍບໍ່ພົ້ນທີ່ພຣະອົງຮູ້

10 ຫົວໃຈຂອງຂ້ານ້ອຍເຕັ້ນ ແລະກຳລັງຂອງຂ້ານ້ອຍໝົດໄປ
ແລະຄວາມສະຫວ່າງໃນຕາຂອງຂ້ານ້ອຍ
ກໍສູນໄປຈາກຂ້ານ້ອຍແລ້ວ
11 ມິດສະຫາຍ ແລະເພື່ອນບ້ານຂອງຂ້ານ້ອຍຢືນເດັ່ນຢູ່ຫ່າງ
ຈາກໄພພິບັດຂອງຂ້ານ້ອຍ
ແລະພີ່ນ້ອງຂອງຂ້ານ້ອຍຢືນຫ່າງອອກໄປໄກພຸ້ນ
12 ແລະບັນດາຜູ້ທີ່ສະແຫວງຫາຈະຂ້າຊີວິດຂອງຂ້ານ້ອຍ
ໄດ້ວາງບ້ວງແຮ້ວໄວ້ ບັນດາຜູ້ທີ່ຄິດເຮັດຮ້າຍຂ້ານ້ອຍເວົ້າເປັນອຸບາຍ
ແລະຄິດເຖິງການທໍລະຍົດຢູ່ແຕ່ເຊົ້າຮອດຄ່ຳ

13 ແຕ່ຂ້ານ້ອຍເໝືອນຄົນຫູໜວກ ຂ້ານ້ອຍບໍ່ໄດ້ຍິນ
ຂ້ານ້ອຍເໝືອນຄົນປາກກືກ ຂ້ານ້ອຍມິດງຽບຢູ່
14 ຂ້ານ້ອຍເໝືອນຄົນທີ່ບໍ່ໄດ້ຍິນ ຊຶ່ງໃນປາກນັ້ນບໍ່ມີຄຳຕອບ
15 ຂ້າແດ່ພຣະຜູ້ເປັນເຈົ້າ ແຕ່ຂ້ານ້ອຍຫວັງໃຈໃນພຣະອົງ
ຂ້າແດ່ອົງພຣະຜູ້ເປັນເຈົ້າພຣະເຈົ້າຂອງຂ້ານ້ອຍ
ຄືພຣະອົງຜູ້ທີ່ຮັບຟັງຂ້ານ້ອຍ
16 ເພາະຂ້ານ້ອຍທູນວ່າ "ຂໍໂຜດຟັງຂ້ານ້ອຍເຖີດ
ບໍ່ດັ່ງນັ້ນ ພວກເຂົາຈະຊົມຊື່ນຍິນດີເພາະຂ້ານ້ອຍ
ຄືຜູ້ທີ່ອວດອ້າງຕໍ່ຂ້ານ້ອຍເມື່ອຕີນຂ້ານ້ອຍພາດໄປ"
17 ເພາະຂ້ານ້ອຍກຳລັງຈະລົ້ມແລ້ວ
ແລະຄວາມເສົ້າໂສກມີຢູ່ຕໍ່ໜ້າຂ້ານ້ອຍສະເໝີ
18 ຂ້ານ້ອຍຈະສາລະພາບຄວາມຊົ່ວຊ້າຂອງຂ້ານ້ອຍ
ຂ້ານ້ອຍຈະເປັນທຸກເພາະບາບຂອງຂ້ານ້ອຍ
19 ບັນດາຜູ້ທີ່ເປັນຄູ່ແຂ່ງຂອງຂ້ານ້ອຍກໍວ່ອງໄວ ແລະແຂງແຮງ
ແລະຄົນທີ່ກຽດຊັງຂ້ານ້ອຍໂດຍຂາດເຫດຜົນກໍທະວີຫລາຍຂຶ້ນ
20 ບັນດາຜູ້ທີ່ກະທຳຊົ່ວຕອບແທນຄວາມດີ ກໍເປັນສັດຕູຂອງຂ້ານ້ອຍ
ເພາະຂ້ານ້ອຍຕິດຕາມຄວາມດີ

21 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຢ່າປະຖິ້ມຂ້ານ້ອຍ
ຂ້າແດ່ພຣະເຈົ້າຂອງຂ້ານ້ອຍ ຂໍຢ່າສະຖິດໄກຈາກຂ້ານ້ອຍ
22 ຂ້າແດ່ອົງພຣະຜູ້ເປັນເຈົ້າຄວາມພົ້ນຂອງຂ້ານ້ອຍ
ຂໍຮີບມາຊ່ວຍຂ້ານ້ອຍເຖີດ

# ບົດທີ 39

## ດາວິດຮັກສາຄວາມຄິດຂອງຕົນໄວ້

*ເຖິງຫົວໜ້ານັກຮ້ອງ ເຖິງເຢດູທູນ ເພງສັນລະເສີນຂອງດາວິດ*

1 ຂ້ານ້ອຍວ່າ “ຂ້ານ້ອຍຈະຄຸ້ມຄອງທາງຂອງຂ້ານ້ອຍ
ເພື່ອຂ້ານ້ອຍຈະບໍ່ເຮັດບາບດ້ວຍລີ້ນຂອງຂ້ານ້ອຍ
ຂ້ານ້ອຍຈະໃສ່ ບັງຫຽນປາກຂອງຂ້ານ້ອຍ
ຕາບເທົ່າທີ່ຄົນຊົ່ວມີຢູ່ຕໍ່ໜ້າຂ້ານ້ອຍ”
2 ຂ້ານ້ອຍກໍເປັນຄົນປາກກືກມິດງຽບຢູ່ ຂ້ານ້ອຍບໍ່ໄດ້ເວົ້າເຖິງສິ່ງທີ່ດີ
ຄວາມທຸກໃຈຂອງຂ້ານ້ອຍຮຸນແຮງຂຶ້ນ
3 ຈິດໃຈຂ້ານ້ອຍຮ້ອນຢູ່ພາຍໃນຂ້ານ້ອຍ
ຂະນະທີ່ຂ້ານ້ອຍກຳລັງຄຶດຕຶກຕອງຢູ່ນັ້ນ ໄຟກໍລຸກຂຶ້ນ
ຂ້ານ້ອຍຈຶ່ງເວົ້າດ້ວຍລີ້ນຂອງຂ້ານ້ອຍວ່າ

4 “ຂ້າແດ່ພຣະຜູ້ເປັນເຈົ້າຂໍໃຫ້ຂ້ານ້ອຍຮູ້ເຖິງບັ້ນປາຍຂອງຂ້ານ້ອຍ
ແລະວັນເວລາຂອງຂ້ານ້ອຍຈະດົນຈັກເທົ່າໃດ
ເພື່ອຂ້ານ້ອຍຈະຮູ້ວ່າຊີວິດຂອງຂ້ານ້ອຍບໍ່ທ່ຽງຢ່າງໃດ
5 ເບິ່ງແມ ພຣະອົງເຮັດໃຫ້ວັນເວລາຂອງຂ້ານ້ອຍຍາວສອງສາມຝ່າມືເທົ່ານັ້ນ
ຊົ່ວຊີວິດຂອງຂ້ານ້ອຍບໍ່ເທົ່າໃດເລີຍສະເພາະພຣະພັກພຣະອົງ
ມະນຸດທຸກຄົນດຳລົງຢູ່ຢ່າງບໍ່ມີປະໂຫຍດ

*ເຊລາ*

6 ມະນຸດໄປໆມາໆຢ່າງເງົາ
ພວກເຂົາທັງຫລາຍຫຍຸ້ງຢູ່ກັບການອອດອ້າງເປົ່າໆ ມະນຸດກອບໂກຍກອງໄວ້
ແລະບໍ່ຮູ້ວ່າໃຜຈະເກັບໄປ

7 ຂ້າແດ່ອົງພຣະຜູ້ເປັນເຈົ້າບັດນີ້ຂ້ານ້ອຍຈະລໍຖ້າຫຍັງ
ຄວາມຫວັງຂອງຂ້ານ້ອຍຢູ່ໃນພຣະອົງ
8 ຂໍຊ່ວຍຂ້ານ້ອຍໃຫ້ພົ້ນຈາກການລະເມີດທັງໝົດຂອງຂ້ານ້ອຍ
ຢ່າໃຫ້ຂ້ານ້ອຍເປັນທີ່ນິນທາຂອງຄົນໂງ່
9 ຂ້ານ້ອຍເປັນຄົນປາກກືກ ຂ້ານ້ອຍບໍ່ອ້າປາກ
ແມ່ນພຣະອົງເອງທີ່ກະທຳເຊັ່ນນັ້ນ

## ຄຳອະທິຖານຂອງດາວິດ

10 ຂໍຍົກໄປຈາກຂ້ານ້ອຍເຖີດ
ຂ້ານ້ອຍອ່ອນແຮງໄປດ້ວຍການທຸບຕີຈາກພຣະຫັດຂອງພຣະອົງ
11 ເມື່ອພຣະອົງຕີສອນມະນຸດດ້ວຍການລົງໂທດ ເພາະເລື່ອງຄວາມຊົ່ວຊ້າ

ພຣະອົງເຜົາຜານຄວາມງາມຂອງລາວເໝືອນຢ່າງຕົວມອດ
ມະນຸດທຸກຄົນກໍບໍ່ມີປະໂຫຍດ”

*ເຊລາ*

12 “ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຮັບຟັງຄຳອະທິຖານຂອງຂ້ານ້ອຍ
ຂໍຫງ່ຽງພຣະກັນແກ່ການຮ້ອງທູນຂອງຂ້ານ້ອຍ
ຂໍຢ່າເສີຍຊ້າຕໍ່ນ້ຳຕາຂອງຂ້ານ້ອຍ
ເພາະຂ້ານ້ອຍເປັນແຕ່ແຂກທີ່ຜ່ານໄປຂອງພຣະອົງ
ເປັນຄົນທີ່ອາໄສຢູ່ເໝືອນຢ່າງບັນພະບູລຸດທັງຫລາຍຂອງຂ້ານ້ອຍ
13 ຂໍຫັນພຣະພັກຈາກຂ້ານ້ອຍ ເພື່ອຂ້ານ້ອຍຈະເບີກບານຂຶ້ນ
ກ່ອນທີ່ຂ້ານ້ອຍຈະຈາກໄປ ແລະບໍ່ມີຊີວິດຢູ່ອີກ”

# ບົດທີ 40

## ເລື່ອງຄວາມວາງໃຈໃນພຣະເຈົ້າ

*ເຖິງຫົວໜ້ານັກຮ້ອງ ເພງສັນລະເສີນຂອງດາວິດ*

1 ຂ້ານ້ອຍໄດ້ພຽນຄອຍຖ້າພຣະຜູ້ເປັນເຈົ້າ
ພຣະອົງກົ້ມຕົວລົງຮັບຟັງຄຳຮ້ອງທູນຂອງຂ້ານ້ອຍ
2 ພຣະອົງຍົກຂ້ານ້ອຍຂຶ້ນມາຈາກຂຸມແຫ່ງຄວາມຈິບຫາຍ
ອອກມາຈາກຂີ້ຕົມ ແລ້ວວາງຕີນຂອງຂ້ານ້ອຍລົງເທິງສີລາ
ເຮັດໃຫ້ທາງຂອງຂ້ານ້ອຍໝັ້ນຄົງ
3 ພຣະອົງບັນຈຸເພງໃໝ່ໃນປາກຂ້ານ້ອຍ
ເປັນບົດເພງສັນລະເສີນພຣະເຈົ້າຂອງເຮົາ
ຄົນເປັນຈຳນວນຫລາຍຈະເຫັນ ແລະຢຳເກງ ແລະວາງໃຈໃນພຣະຜູ້ເປັນເຈົ້າ

4 ຄົນໃດທີ່ວາງໃຈໃນພຣະຜູ້ເປັນເຈົ້າກໍເປັນສຸກ
ຜູ້ບໍ່ໄດ້ຫັນໄປຫາຄົນຈອງຫອງ
ຫລືໄປຫາບັນດາຜູ້ທີ່ຫລົງເຮັດບາບໄປຕາມຄວາມບໍ່ຈິງ
5 ຂ້າແດ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງຂ້ານ້ອຍ
ພຣະອົງໄດ້ທະວີພຣະລາຊະກິດອັນມະຫັດສະຈັນຂອງພຣະອົງ
ແລະພຣະດຳລັດຂອງພຣະອົງແກ່ຂ້ານ້ອຍ
ບໍ່ມີຜູ້ໃດລາຍງານພຣະລາຊະກິດທັງໝົດເຫລົ່ານັ້ນໄດ້
ຖ້າຂ້ານ້ອຍຈະປະກາດ ແລະບອກກ່າວແລ້ວ
ກໍມີຫລວງຫລາຍເຫລືອທີ່ຈະນັບ

6 ເຄື່ອງສັດບູຊາ ແລະເຄື່ອງບູຊາພຣະອົງບໍ່ປະສົງ
ພຣະອົງເປີດຫູຂອງຂ້ານ້ອຍ

ເຄື່ອງເຜົາບູຊາ ແລະເຄື່ອງບູຊາໄຖ່ບາບ ພຣະອົງບໍ່ໄດ້ຮຽກຮ້ອງ
7 ແລ້ວຂ້ານ້ອຍທູນວ່າ “ເບິ່ງແມ ຂ້ານ້ອຍມາແລ້ວ
ພຣະເຈົ້າຂ້າ ໃນໜັງສືມ້ວນກໍມີຂຽນເລື່ອງຂ້ານ້ອຍ
8 ຂ້າແດ່ພຣະເຈົ້າຂອງຂ້ານ້ອຍ
ຂ້ານ້ອຍປິຕິຍິນດີທີ່ຈະກະທຳຕາມນໍ້າພຣະໄທພຣະອົງ
ພຣະບັນຍັດຂອງພຣະອົງຢູ່ໃນຈິດໃຈຂອງຂ້ານ້ອຍ”

9 ຂ້ານ້ອຍໄດ້ປະກາດເລື່ອງຄວາມຊອບທຳໃນຊຸມນຸມຊົນໃຫຍ່
ຂ້າແດ່ພຣະຜູ້ເປັນເຈົ້າ ເບິ່ງແມ ຕາມທີ່ພຣະອົງຮູ້ແລ້ວ
ຂ້ານ້ອຍບໍ່ໄດ້ຫ້າມຮີມປາກຂອງຂ້ານ້ອຍໄວ້ເລີຍ
10 ຂ້ານ້ອຍບໍ່ໄດ້ປິດບັງຄວາມຊອບທຳຂອງພຣະອົງໄວ້
ໃນຈິດໃຈຂອງຂ້ານ້ອຍເທົ່ານັ້ນ ແຕ່
ຂ້ານ້ອຍໄດ້ເວົ້າເຖິງຄວາມສັດຊື່ ແລະຄວາມພົ້ນຂອງພຣະອົງ
ຂ້ານ້ອຍບໍ່ໄດ້ປິດບັງຄວາມເມດຕາ
ແລະຄວາມຈິງຂອງພຣະອົງໄວ້ຈາກຊຸມນຸມຊົນໃຫຍ່ນັ້ນ

11 ຂ້າແດ່ພຣະຜູ້ເປັນເຈົ້າ
ຂໍພຣະອົງຢ່າຖ່ວງດຶງພຣະກະລຸນາຂອງພຣະອົງຈາກຂ້ານ້ອຍ
ຂໍໃຫ້ຄວາມເມດຕາ ແລະຄວາມຈິງຂອງພຣະອົງຮັກສາຂ້ານ້ອຍໄວ້ເປັນນິດ
12 ເພາະຄວາມຊົ່ວໄດ້ອ້ອມຂ້ານ້ອຍໄວ້ຢ່າງນັບບໍ່ຖ້ວນ
ຄວາມຊົ່ວຊ້າຂອງຂ້ານ້ອຍຕາມທັນຂ້ານ້ອຍ
ຈົນຂ້ານ້ອຍເບິ່ງຫຍັງບໍ່ເຫັນ ມັນຫລາຍກວ່າເສັ້ນຜົມເທິງຫົວ
ຂອງຂ້ານ້ອຍ ຈິດໃຈຂອງຂ້ານ້ອຍກໍຢ້ານກົວ
13 ຂ້າແດ່ພຣະຜູ້ເປັນເຈົ້າຂໍພໍພຣະໄທທີ່ຈະຊ່ວຍຂ້ານ້ອຍໃຫ້ພົ້ນ
ຂ້າແດ່ພຣະຜູ້ເປັນເຈົ້າຂໍຮີບມາສົງເຄາະຂ້ານ້ອຍເຖີດ

14 ຂໍໃຫ້ຜູ້ທີ່ຫາໂອກາດທຳລາຍຊີວິດຂອງຂ້ານ້ອຍໄດ້ຮັບຄວາມອັບອາຍ
ແລະເກີດຄວາມຫຍຸ້ງຍາກ
ຂໍໃຫ້ຜູ້ປາດຖະໜາສິ່ງຊົ່ວຮ້າຍຕໍ່ຂ້ານ້ອຍນັ້ນຕ້ອງຖອຍຫລັງກັບໄປ
ແລະໄດ້ເສື່ອມເສຍກຽດ
15 ຜູ້ທີ່ເວົ້າກັບຂ້ານ້ອຍວ່າ “ເຮີຍເຮີຍ” ນັ້ນ
ຂໍໃຫ້ພວກເຂົາຕົກໃຈເພາະຄວາມອັບອາຍຂອງຕົນ

16 ຂໍໃຫ້ບັນດາຜູ້ສະແຫວງຫາພຣະອົງຊົມຊື່ນຍິນດີ ແລະຍິນດີໃນພຣະອົງ
ຂໍໃຫ້ບັນດາຜູ້ທີ່ຮັກຄວາມພົ້ນຂອງພຣະອົງ
ກ່າວສະເໝີວ່າ “ພຣະຜູ້ເປັນເຈົ້າຍິ່ງໃຫຍ່”

17 ຝ່າຍຂ້ານ້ອຍຍາກຈົນ ແລະຂັດສົນ
ແຕ່ອົງພຣະຜູ້ເປັນເຈົ້າເອົາພຣະໄທໃສ່ຂ້ານ້ອຍ
ຂ້າແດ່ພຣະເຈົ້າຂອງຂ້ານ້ອຍ ຂໍຢ່າລໍຊ້າ
ພຣະອົງເປັນຜູ້ອຸປະຖຳແລະເປັນຜູ້ຊ່ວຍໃຫ້ພົ້ນຂອງຂ້ານ້ອຍ

# ບົດທີ 41

## ການເອົາໃຈໃສ່ຄົນຈົນ ເຖິງຫົວພ້ານັກຮ້ອງ

*ເພງສັນລະເສີນຂອງດາວິດ*

1 ຜູ້ໃດເອົາໃຈໃສ່ຄົນຍາກຈົນກໍເປັນສຸກ
ພຣະຜູ້ເປັນເຈົ້າຈະຊ່ວຍລາວໃຫ້ພົ້ນໃນວັນຍາກລຳບາກ
2 ພຣະຜູ້ເປັນເຈົ້າຈະປ້ອງກັນລາວ ແລະຮັກສາລາວໃຫ້ມີຊີວິດ
ໃນແຜ່ນດິນລາວຈະໄດ້ຮັບພຣະພອນ
ພຣະອົງຈະບໍ່ມອບລາວໄວ້ກັບສັດຕູຂອງລາວໃຫ້ເຮັດຕາມໃຈມັກ
3 ເມື່ອລາວຢູ່ເທິງຕຽງນອນດ້ວຍຄວາມອິດເມື່ອຍ
ພຣະຜູ້ເປັນເຈົ້າຈະເຮັດໃຫ້ລາວແຂງແຮງຂຶ້ນ
ເມື່ອລາວຢູ່ເທິງຕຽງນອນແຫ່ງຄວາມເຈັບໄຂ້
ພຣະອົງຈະຮັກສາລາວໃຫ້ຫາຍໝົດ

## ການທູນຂໍຂອງດາວິດ

4 ຂ້ານ້ອຍທູນວ່າ “ຂ້າແດ່ພຣະຜູ້ເປັນເຈົ້າຂໍພຣະກະລຸນາແກ່ຂ້ານ້ອຍ
ຂໍຮັກສາຈິດວິນຍານຂ້ານ້ອຍ ເພາະຂ້ານ້ອຍໄດ້ເຮັດບາບຕໍ່ພຣະອົງ”
5 ສັດຕູຂອງຂ້ານ້ອຍກ່າວໃສ່ຮ້າຍຂ້ານ້ອຍວ່າ “ເມື່ອໃດລາວຈະຕາຍນໍ
ແລະຊື່ຂອງລາວຈະໄດ້ຈິບຫາຍໄປ”
6 ຖ້າຄົນໜຶ່ງຄົນໃດມາເຫັນຂ້ານ້ອຍ
ລາວຈະເວົ້າເລື່ອງບໍ່ມີປະໂຫຍດ
ຂະນະທີ່ໃຈຂອງລາວເກັບເລື່ອງຄວາມຊົ່ວຊ້າ
ເມື່ອລາວອອກໄປ ລາວກໍເວົ້າເຖິງຢ່າງນັ້ນ
7 ທຸກຄົນທີ່ກຽດຊັງຂ້ານ້ອຍ ກໍຊຸບຊິບກັນເຖິງເລື່ອງຂ້ານ້ອຍ
ພວກເຂົາປອງຮ້າຍຕໍ່ຂ້ານ້ອຍ

8 ພວກເຂົາທັງຫລາຍກ່າວວ່າ “ພະຍາດຮ້າຍເຂົ້າໄປຢູ່ໃນຕົວລາວແລ້ວ
ລາວຈະບໍ່ລຸກໄປຈາກບ່ອນທີ່ລາວນອນນັ້ນອີກ”
9 ເຖິງວ່າເພື່ອນສະໜິດຂອງຂ້ານ້ອຍ ຜູ້ຊຶ່ງຂ້ານ້ອຍໄວ້ວາງໃຈ
ຜູ້ທີ່ໄດ້ກິນເຂົ້າຈີ່ຂອງຂ້ານ້ອຍ ກໍຍົກສົ້ນຕີນສູ້ຂ້ານ້ອຍ

### ດາວິດເພິ່ງພາພຣະເຈົ້າສຳລັບຄວາມຊ່ວຍເຫລືອ

10 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍພຣະອົງພຣະກະລຸນາຕໍ່ຂ້ານ້ອຍ
ຂໍຍົກຂ້ານ້ອຍຂຶ້ນ ເພື່ອຂ້ານ້ອຍຈະຕອບແທນແກ່ພວກເຂົາ
11 ໂດຍການນີ້ ຂ້ານ້ອຍຮູ້ວ່າ ພຣະອົງພໍພຣະໄທໃນຂ້ານ້ອຍ
ຄື ສັດຕູຂອງຂ້ານ້ອຍບໍ່ໄດ້ຊະນະຂ້ານ້ອຍ
12 ແຕ່ພຣະອົງຄ້ຳຊູຂ້ານ້ອຍໄວ້ເພາະຄວາມສັດຊື່ຂອງຂ້ານ້ອຍ
ແລະຕັ້ງຂ້ານ້ອຍໄວ້ຕໍ່ພຣະພັກພຣະອົງຕະຫຼອດໄປ

13 ສາທຸການແດ່ພຣະຜູ້ເປັນເຈົ້າ
ພຣະເຈົ້າ ແຫ່ງ ອິສຣາເອນ ຈາກອະດີດ
ແລະສືບໆໄປເປັນນິດ ອາແມນ ແລະອາແມນ

## ບົດທີ 42

### ການອ້ອນວອນຂອງຄົນພັດພາກຈາກຖິ່ນຖານ

1 ໂອພຣະເຈົ້າຂ້າ ຂ້ານ້ອຍຕ້ອງການພຣະອົງ
ເໝືອນກວາງທີ່ຕ້ອງການສາຍນ້ຳເຢັນໆ.
2 ພຣະອົງເປັນ ພຣະເຈົ້າ ອົງຊົງພຣະຊົນຢູ່
ຂ້ານ້ອຍຢາກຢູ່ໃກ້ພຣະອົງ
ເວລາໃດໜໍ ຂ້ານ້ອຍຈຶ່ງຈະໄດ້ໄປນະມັດສະການຕໍ່ພຣະພັກພຣະອົງ.
3 ຂ້ານ້ອຍຮ້ອງໄຫ້ທັງກາງເວັນ ແລະກາງຄືນ
ຂ້ານ້ອຍກິນເຂົ້າກັບນ້ຳຕາ
ສັດຕູທັງຫລາຍກໍຊັກຖາມຂ້ານ້ອຍຢູ່ຕະຫລອດເວລາວ່າ,
“ພຣະເຈົ້າ ຂອງເຈົ້າຢູ່ໃສ?”
4 ເມື່ອໃດຂ້ານ້ອຍລະນຶກເຖິງອະດີດທີ່ຜ່ານມາ
ຫົວໃຈຂອງຂ້ານ້ອຍກໍຫັກສະບັ້ນລົງ
ຄືຄາວເມື່ອຂ້ານ້ອຍໄປສູ່ພຣະວິຫານຂອງ ພຣະເຈົ້າ
ຮ່ວມກັບຝູງຊົນທັງຫລາຍ
ຂ້ານ້ອຍໄດ້ນຳພາພວກເຂົາຍ່າງຕາມກັນໄປ
ຊຶ່ງເປັນຝູງຊົນທີ່ມີຄວາມສຸກດ້ວຍການຮ້ອງເພງ
ແລະໂຮຮ້ອງສັນລະເສີນ ພຣະເຈົ້າ.

5 ເປັນຫຍັງຂ້ານ້ອຍຈຶ່ງໂສກເສົ້າ?
ເປັນຫຍັງຂ້ານ້ອຍຈຶ່ງລຳບາກ?
ຂ້ານ້ອຍຈະມອບຄວາມຫວັງໄວ້ກັບ ພຣະເຈົ້າ
ແລະຂ້ານ້ອຍຍັງຈະສັນລະເສີນພຣະອົງ

ພຣະຜູ້ຊ່ວຍໃຫ້ພົ້ນໄພ ແລະພຣະເຈົ້າຂອງຂ້ານ້ອຍ.
6 ຫົວໃຈຂອງຂ້ານ້ອຍເກືອບຈະຂາດ
ດັ່ງນັ້ນ ຂ້ານ້ອຍຈຶ່ງຈະລະນຶກເຖິງພຣະອົງ
ໃນຕ່າງຖິ່ນທີ່ເຂດແມ່ນໍ້າຢໍແດນ
ຢູ່ໃກ້ພູເຮີໂມນ ແລະພູມີຊາເຣ
ຂ້ານ້ອຍລະນຶກເຖິງພຣະອົງ.
7 ມະຫາສະໝຸດເລິກກໍຮ້ອງໃສ່ກັນ
ແລະນໍ້າຕົກຕາດຂອງພຣະເຈົ້າສົ່ງສຽງສະໜັ່ນຫວັ່ນໄຫວ
ມັນເປັນເໝືອນກະແສຄື້ນແຫ່ງຄວາມເສຍໃຈ
ຊຶ່ງໄຫລຖ້ວມວິນຍານຂອງຂ້ານ້ອຍ.
8 ຂໍໃຫ້ພຣະຜູ້ເປັນເຈົ້າຊົງສະແດງຄວາມຮັກອັນໝັ້ນຄົງທຸກໆຄືນ
ຂໍໃຫ້ຂ້ານ້ອຍຮ້ອງເພງສັນລະເສີນພຣະອົງທຸກໆມື້
ແລະອ້ອນວອນຫາພຣະເຈົ້າຜູ້ຊົງປະທານຊີວິດໃຫ້ແກ່ຂ້ານ້ອຍ.

9 ຂ້ານ້ອຍທູນຖາມພຣະຜູ້ເປັນເຈົ້າຜູ້ເປັນທີ່ເພິ່ງຂອງຂ້ານ້ອຍວ່າ,
“ເປັນຫຍັງພຣະອົງຊົງລືມຂ້ານ້ອຍ?
ເປັນຫຍັງຂ້ານ້ອຍຈຶ່ງຕ້ອງທົນທຸກທໍລະມານ
ຈາກຄວາມໂຫດຮ້າຍຂອງພວກສັດຕູ?”
10 ຂ້ານ້ອຍຖືກຢຽບຢໍ່າດ້ວຍຄວາມໝິ່ນປະໝາດຂອງພວກເຂົາ
ດັ່ງທີ່ພວກເຂົາໄດ້ຖາມຂ້ານ້ອຍວ່າ,
“ພຣະເຈົ້າຂອງເຈົ້າຢູ່ໃສ?”
11 ເປັນຫຍັງຂ້ານ້ອຍຈຶ່ງໂສກເສົ້າ?
ເປັນຫຍັງຂ້ານ້ອຍຈຶ່ງທຸກລໍາບາກ
ຂ້ານ້ອຍຂໍມອບຄວາມຫວັງໄວ້ກັບພຣະອົງເຈົ້າ
ແລະຂ້ານ້ອຍຍັງຈະສັນລະເສີນພຣະອົງ
ພຣະຜູ້ຊ່ວຍໃຫ້ພົ້ນໄພ ແລະພຣະເຈົ້າຂອງຂ້ານ້ອຍ.

# ບົດທີ 43

## ການອ້ອນວອນຂອງຄົນພັດພາກຈາກຖິ່ນຖານ (ຕໍ່)

1 ໂອພຣະເຈົ້າຂ້າ ຂໍພຣະອົງຊົງປະກາດຄວາມບໍລິສຸດໃຈຂອງຂ້ານ້ອຍ
ແລະຊ່ວຍຂ້ານ້ອຍໃນການຕໍ່ສູ້ຄະດີກັບຄົນອະທໍາ
ຂໍຊົງຊ່ວຍຂ້ານ້ອຍໃຫ້ພົ້ນຈາກການຕົວະຍົວະຂອງຄົນຊົ່ວ.
2 ພຣະອົງຊົງເປັນທີ່ເພິ່ງຂອງຂ້ານ້ອຍ
ເປັນຫຍັງພຣະອົງຈຶ່ງຊົງປະລະຂ້ານ້ອຍໄປ?

ເປັນຫຍັງຂ້ານ້ອຍຈຶ່ງຕ້ອງທົນທຸກທໍລະມານ
ຍ້ອນຄວາມໂຫດຮ້າຍຂອງພວກສັດຕູ?

3 ຂໍຊົງສົ່ງແສງສະຫວ່າງ ແລະຄວາມຈິງຂອງພຣະອົງນຳໜ້າຂ້ານ້ອຍໄປເທີ້ນ
ແລະຊົງພາຂ້ານ້ອຍກັບຄືນສູ່ເມືອງຊີໂອນ ພູສັກສິດຂອງພຣະອົງ
ແລະສູ່ພຣະວິຫານບ່ອນທີ່ພຣະອົງຊົງປະທັບຢູ່.
4 ໂອພຣະເຈົ້າຂ້າ ຂ້ານ້ອຍຈະໄປສູ່ແທ່ນບູຊາຂອງພຣະອົງ
ເພາະພຣະອົງຊົງປະທານຄວາມມ່ວນຊື່ນແລະຄວາມສຸກແກ່ຂ້ານ້ອຍ
ຂ້າແດ່ພຣະເຈົ້າ ພຣະເຈົ້າຂອງຂ້ານ້ອຍ
ຂ້ານ້ອຍຈະດີດພິນ ແລະຮ້ອງເພງສັນລະເສີນພຣະອົງ.

5 ເປັນຫຍັງຂ້ານ້ອຍຈຶ່ງໂສກເສົ້າ?
ເປັນຫຍັງຂ້ານ້ອຍຈຶ່ງທຸກລຳບາກ?
ຂ້ານ້ອຍຂໍມອບຄວາມຫວັງໄວ້ກັບ ພຣະເຈົ້າ
ແລະຂ້ານ້ອຍຍັງຈະສັນລະເສີນພຣະອົງ
ພຣະຜູ້ຊ່ອຍ ໃຫ້ພົ້ນໄພ ແລະ ພຣະເຈົ້າຂອງຂ້ານ້ອຍ.

# ບົດທີ 44

## ຄວາມຍິນດີໃນອະດີດ

*ເຖິງຫົວໜ້ານັກຮ້ອງ ມັດຄີນບົດໜຶ່ງຂອງຄະນະໂກຣາ.*

1 ຂ້າແດ່ພຣະເຈົ້າ ຂ້ານ້ອຍທັງຫລາຍໄດ້ຍິນກັບຫູ
ຊຶ່ງບັນພະບູລຸດຂອງຂ້ານ້ອຍທັງຫລາຍເລົ່າໃຫ້ຟັງ
ເຖິງກິດຈະການຊຶ່ງພຣະອົງໄດ້ກະທຳໃນສະໄໝຂອງພວກເຂົາ
ໃນສະໄໝບູຮານນັ້ນ
2 ແຕ່ພຣະອົງຂັບໄລ່ພວກຕ່າງຊາດອອກໄປດ້ວຍພຣະຫັດຂອງພຣະອົງ
ແລະໄດ້ຕັ້ງບັນພະບູລຸດຂອງພວກຂ້າພະອົງໄວ້
ພຣະອົງເຮັດໃຫ້ຊົນຊາດທັງຫລາຍລຳບາກ ແລະຂັບໄລ່ອອກໄປ
3 ເພາະພວກເຂົາທັງຫລາຍບໍ່ໄດ້ແຜ່ນດິນນັ້ນດ້ວຍດາບຂອງພວກເຂົາເອງ
ບໍ່ແມ່ນແຂນຂອງພວກເຂົາທີ່ມີໄຊ ແຕ່ໂດຍພຣະຫັດຂວາ
ແລະພຣະກອນຂອງພຣະອົງ ແລະໂດຍຄວາມສະຫວ່າງແຫ່ງພຣະພັກພຣະອົງ
ເພາະພຣະອົງພໍພຣະໄທພວກເຂົາເຫລົ່ານັ້ນ

4 ຂ້າແດ່ພຣະເຈົ້າ ພຣະອົງເປັນກະສັດຂອງຂ້ານ້ອຍ
ຂໍພຣະອົງບັນຊາການຊ່ອຍໃຫ້ພົ້ນໄວ້ສຳລັບຢາໂຄບ
5 ຂ້ານ້ອຍທັງຫລາຍດັນສັດຕູອອກໄປໂດຍພຣະອົງ

ຂ້ານ້ອຍທັງຫລາຍຢຽບຄົນທີ່ລຸກຂຶ້ນຕໍ່ສູ້ຂ້ານ້ອຍລົງ
ດ້ວຍພຣະນາມຂອງພຣະອົງ
6 ເພາະຂ້ານ້ອຍບໍ່ວາງໃຈໃນຄັນທະນູຂອງຂ້ານ້ອຍ
ແລະດາບຂອງຂ້ານ້ອຍຊ່ວຍຂ້ານ້ອຍໃຫ້ລອດພົ້ນ
ບໍ່ໄດ້
7 ແຕ່ພຣະອົງໄດ້ຊ່ວຍຂ້ານ້ອຍທັງຫລາຍໃຫ້ລອດພົ້ນຈາກສັດຕູ
ແລະໃຫ້ຜູ້ທີ່ກຽດຊັງຂ້ານ້ອຍໄດ້ຮັບຄວາມອັບອາຍ
8 ຂ້ານ້ອຍທັງຫລາຍອວດເຖິງ **ພຣະເຈົ້າ** ໄດ້ຕະຫລອດເວລາ
ແລະຂ້ານ້ອຍທັງຫລາຍສັນລະເສີນພຣະນາມຂອງພຣະອົງ
ຕະຫລອດໄປເປັນນິດ

*ເຊລາ*

9 ແຕ່ພຣະອົງຍັງປະຖິ້ມຂ້ານ້ອຍທັງຫລາຍ
ແລະໃຫ້ຂ້ານ້ອຍໄດ້ຮັບຄວາມອັບອາຍຂາຍໜ້າ
ແລະບໍ່ໄດ້ສະເດັດອອກໄປກັບກອງທັບຂອງຂ້ານ້ອຍທັງຫລາຍ
10 ພຣະອົງເຮັດໃຫ້ຂ້ານ້ອຍທັງຫລາຍຖອຍຫລັງຈາກສັດຕູ
ແລະຄົນທີ່ກຽດຊັງຂ້ານ້ອຍທັງຫລາຍ ກໍໄດ້ປຸ້ນສິ່ງຂອງໄປ
11 ພຣະອົງເຮັດໃຫ້ຂ້ານ້ອຍທັງຫລາຍເປັນດັ່ງແກະທີ່ຈະເອົາໄປຂ້າກິນ
ແລະຂັບໄລ່ຂ້ານ້ອຍທັງຫລາຍໃຫ້ໄປຢູ່ທ່າມກາງບັນດາປະຊາຊາດ
12 ພຣະອົງຂາຍປະຊາຊົນຂອງພຣະອົງ ດ້ວຍລາຄາຖືກໆໂດຍບໍ່ໄດ້ຫຍັງເພີ່ມເລີຍ
13 ພຣະອົງເຮັດໃຫ້ຂ້ານ້ອຍເປັນທີ່ນິນທາຂອງເພື່ອນບ້ານ ເປັນທີ່ເຍາະເຍີ້ຍ
ແລະເປັນທີ່ໝິ່ນປະໝາດແກ່ຜູ້ທີ່ຢູ່ຮອບຂ້ານ້ອຍ
14 ພຣະອົງເຮັດໃຫ້ຂ້ານ້ອຍເປັນທີ່ນິນທາທ່າມກາງບັນດາປະຊາຊາດ
ເປັນທີ່ສັ່ນຫົວທ່າມກາງຊາດທັງຫລາຍ
15 ຄວາມອັບອາຍຂາຍໜ້າມາຢູ່ຕໍ່ໜ້າຂ້ານ້ອຍແຕ່ເຊົ້າຮອດຄໍ່າ
ແລະຄວາມອັບອາຍຄຸມໜ້າຂ້ານ້ອຍ
16 ເນື່ອງດ້ວຍສຽງຂອງຄົນເຍາະເຍີ້ຍ ແລະຄົນໝິ່ນປະໝາດ
ເນື່ອງດ້ວຍສັດຕູແລະຜູ້ແກ້ແຄ້ນ

17 ສິ່ງທັງປວງນີ້ເກີດແກ່ຂ້ານ້ອຍທັງຫລາຍ ເຖິງວ່າຂ້ານ້ອຍບໍ່ລືມພຣະອົງ
ຫລືລະເມີດຕໍ່ຄຳໝັ້ນສັນຍາຂອງພຣະອົງ
18 ຈິດໃຈຂອງຂ້ານ້ອຍທັງຫລາຍກໍບໍ່ໄດ້ຖອຍຫລັງກັບ
ທາງເດີນຂອງຂ້ານ້ອຍທັງຫລາຍກໍບໍ່ໄດ້ໜີຈາກເສັ້ນທາງຂອງພຣະອົງ
19 ເຖິງແມ່ນພຣະອົງໃຫ້ຂ້ານ້ອຍທັງຫລາຍແຕກມຸ່ນໄປ
ໃນບ່ອນຢູ່ຂອງຝູງໝາປ່າ

ແລະຄຸມຂ້ານ້ອຍທັງຫລາຍໄວ້ດ້ວຍເງົາມັດຈຸລາດ
20 ຖ້າເຮົາໄດ້ລືມພຣະນາມພຣະເຈົ້າຂອງເຮົາ ຫລືໄປຂາບໄຫວ້ແກ່ພະອື່ນ
21 ພຣະເຈົ້າຈະບໍ່ໄດ້ຄົ້ນຫາເລື່ອງນີ້ຫລື
ເພາະພຣະອົງຮູ້ຄວາມເລິກລັບຂອງຈິດໃຈ
22 ເພາະເຫັນແກ່ພຣະອົງ ຂ້ານ້ອຍທັງຫລາຍຈຶ່ງຖືກປະຫານຊີວິດທຸກໆມື້
ແລະຖືວ່າເປັນເໝືອນແກະສຳລັບຈະເອົາໄປຂ້າ

### ດາວິດທູນຂໍຄວາມຊ່ວຍເຫລືອ

23 ຂ້າແດ່ອົງພຣະຜູ້ເປັນເຈົ້າຂໍຕື່ນເຖີດ ເຫດໃດພຣະອົງບັນທົມຢູ່
ຂໍຕື່ນຂຶ້ນເຖີດ ຂໍຢ່າປະຖິ້ມຂ້ານ້ອຍຕະຫລອດໄປເລີຍ
24 ເຫດໃດພຣະອົງເຊື່ອງພຣະພັກຂອງພຣະອົງ
ເຫດໃດພຣະອົງລືມການທີ່ຂ້ານ້ອຍທັງຫລາຍທຸກຍາກ ແລະຖືກບີບບັງຄັບ
25 ເພາະຈິດວິນຍານຂອງຂ້ານ້ອຍທັງຫລາຍເນີ້ງຕົວລົງເຖິງດິນ
ຮ່າງກາຍຂອງຂ້ານ້ອຍທັງຫລາຍເກາະຕິດດິນ
26 ລຸກຂຶ້ນເຖີດພຣະເຈົ້າຂ້າ ຂໍສະເດັດມາຊ່ວຍຂ້ານ້ອຍທັງຫລາຍ
ຂໍໄຖ່ຂ້ານ້ອຍໄວ້ເພື່ອເຫັນແກ່ຄວາມເມດຕາຂອງພຣະອົງ

# ບົດທີ 45

## ບົດເພງສຳລັບກະສັດແຕ່ງງານ

*ເຖິງຫົວໜ້ານັກຮ້ອງ ຕາມທຳນອງດອກບົວ ມັດສະກິນບົດໜຶ່ງຂອງຄະນະໂກຣາ.*

*ເພງແຫ່ງຄວາມຮັກ*

1 ຈິດໃຈຂ້ານ້ອຍລົ້ນໄຫລດ້ວຍຄວາມຄິດດີ
ຂ້ານ້ອຍແຕ່ງບົດປະພັນຂອງຂ້ານ້ອຍຖວາຍກະສັດ
ລີ້ນຂອງຂ້ານ້ອຍເໝືອນປາກກາຂອງນັກປະພັນທີ່ຊຳນານ
2 ທ່ານເປັນຜູ້ງາມເລີດຍິ່ງກວ່າບຸດທັງຫລາຍຂອງມະນຸດ
ພະຄຸນຫລັ່ງລົງເທິງຮີມປາກຂອງພະອົງ
ເພາະສະນັ້ນພຣະເຈົ້າອຳນວຍພຣະພອນໃຫ້ພະອົງຕະຫລອດເວລາ

3 ຂ້າແດ່ພະອົງ ຜູ້ມີລິດອຳນາດ ຂໍຂັດດາບໄວ້ທີ່ແອວຂອງພະອົງ
ໂດຍສະຫງ່າລາສີ ແລະຄວາມສູງສົ່ງຂອງພະອົງ
4 ຂໍປະທັບມ້າຢ່າງສະງ່າຜ່າເຜີຍສະເດັດໄປຢ່າງມີໄຊ
ເພື່ອເຫັນແກ່ຄວາມຈິງ ຄວາມອ່ອນສຸພາບ ແລະຄວາມຊອບທຳ
ໃຫ້ພະຫັດຂວາຂອງພະອົງສັ່ງສອນກິດຈະການອັນໜ້າຢ້ານ
5 ລູກທະນູຂອງພະອົງກໍແທງຢູ່ໃນຈິດໃຈຂອງສັດຕູຂອງກະສັດ
ຊົນຊາດທັງຫລາຍຈຶ່ງລົ້ມຢູ່ໃຕ້ພະອົງ

6 ໂອພຣະເຈົ້າຂ້າ ພຣະທີ່ນັ່ງຂອງພຣະອົງດຳລົງຢູ່ສືບໆເປັນນິດ
ແລະພຣະລາຊະທານພຣະກອນແຫ່ງອານາຈັກຂອງພຣະອົງ
ກໍເປັນພຣະກອນອັນທ່ຽງທຳ
7 ພຣະອົງຮັກຄວາມຊອບທຳ ແລະກຽດຊັງຄວາມຊົ່ວຊ້າ
ສະນັ້ນພຣະເຈົ້າຄືພຣະເຈົ້າຂອງພະອົງໄດ້ເຈີມພະອົງໄວ້
ດ້ວຍນ້ຳມັນແຫ່ງຄວາມຍິນດີຍິ່ງກວ່າພະສະຫາຍທັງປວງຂອງພະອົງ
8 ບັນດາສະຫລອງພະອົງຂອງພະອົງກໍຫອມໄປດ້ວຍກິ່ນຢາງໄມ້ຫອມ
ແລະກິ່ນອາໂລ ແລະການສະຫລອງຈາກພະລາຊະວັງງາຊ້າງ
ສະຫລອງພະອົງເຫລົ່ານີ້ເຮັດໃຫ້ພະອົງຍິນດີ
9 ໃນໝູ່ສະຕີຜູ້ມີກຽດຂອງພະອົງ ມີລາຊະທິດາຂອງບັນດາກະສັດ
ພະລາຊິນີທີ່ປະດັບດ້ວຍທອງຄຳເມືອງໂອຟີປະທັບ
ຢູ່ຂ້າງຂວາພະຫັດຂອງພະອົງ

10 ທິດາເອີຍ ຈົ່ງພິຈາລະນາ ຟັງ ແລະອຽງຫູຂອງນາງລົງ
ຈົ່ງລືມຊົນຊາດຂອງນາງ ແລະລືມເຮືອນພໍ່ຂອງນາງເສຍ
11 ແລະກະສັດຈະປາດຖະໜາຄວາມງາມຂອງນາງ
ເນື່ອງຈາກພະອົງເປັນເຈົ້ານາຍຂອງນາງ
ຈົ່ງກາບລົງໃຫ້ພະອົງສາ
12 ທິດາຂອງເມືອງຕີເຣຈະເອົາຂອງກຳນັນມາກຳນັນນາງ
ຄືເສດຖີຮັ່ງມີທີ່ສຸດຂອງປະຊາຊົນຈະຂໍຄວາມກະລຸນາຈາກນາງ

13 ເຈົ້າຍິງປະດັບພະກາຍໃນຫ້ອງຂອງພະນາງດ້ວຍເສື້ອຜ້າຍົກທອງຄຳ
14 ພວກເຂົາຈະນຳພະນາງຜູ້ນຸ່ງເສື້ອຫລາຍສີເຂົ້າເຝົ້າກະສັດ
ແລະຈະນຳຍິງພົມມະຈາລີຜູ້ຕິດຕາມ
ຄືເພື່ອນເຈົ້າສາວມາຖວາຍພະອົງ
15 ພວກເຂົາທັງຫລາຍຈະຖືກນຳໄປດ້ວຍຄວາມຊື່ນບານແລະຍິນດີ
ພວກເຂົາຈະເຂົ້າໄປໃນພະລາຊະວັງ

16 ບັນດາລູກຊາຍຂອງພະອົງຈະແທນບັນພະບູລຸດຂອງພະອົງ
ພະອົງຈະແຕ່ງຕັ້ງໃຫ້ເປັນເຈົ້ານາຍທົ່ວແຜ່ນດິນໂລກທັງໝົດ
17 ເຮົາຈະເຮັດໃຫ້ພະນາມຂອງພະອົງ
ເປັນທີ່ເຊີດຊູຕະຫລອດຊົ່ວອາຍຸ
ສະນັ້ນ ຊົນຊາດທັງຫລາຍຈະສັນລະເສີນພະອົງເປັນນິດ

# ບົດທີ 46

## ພຣະເຈົ້າຊົງສະຖິດຢູ່ກັບພວກເຈົ້າ

1 ພຣະເຈົ້າຊົງເປັນທີ່ພັກພາອາໄສ ແລະຊົງເປັນກຳລັງຂອງພວກຂ້ານ້ອຍ
ໃນຍາມລຳບາກພຣະອົງຊົງຕຽມພ້ອມຊ່ອຍເຫລືອສະເໝີ.
2 ເມື່ອໂລກນີ້ຫາກສັ່ນສະເທືອນ
ແລະພູທັງຫລາຍລົ້ມເຈື່ອນທະລາຍລົງໃສ່ມະຫາສະໝຸດອັນເລິກ.
3 ແມ່ນວ່ານໍ້າທະເລມີສຽງດັງສະໜັ່ນຫວັ່ນໄຫວ
ແລະພູທັງຫລາຍສັ່ນສະເທືອນຢ່າງແຮງ
ພວກຂ້ານ້ອຍກໍຈະບໍ່ຢ້ານ.

*ເຊລາ*

4 ມີແມ່ນໍ້າສາຍໜຶ່ງໄດ້ເຮັດໃຫ້ຄົນໃນນະຄອນຂອງພຣະເຈົ້າ
ແລະສູ່ບ່ອນປະທັບອັນສັກສິດ
ຂອງພຣະເຈົ້າຜູ້ຊົງສູງສຸດໄດ້ຮັບຄວາມຍິນດີ.
5 ພຣະເຈົ້າຊົງສະຖິດຢູ່ໃນນະຄອນໃດ ນະຄອນນັ້ນກໍຈະບໍ່ຖືກທຳລາຍຈັກເທື່ອ
ໃນຕອນເຊົ້າພຣະອົງຈະສະເດັດມາຊ່ອຍເຫລືອເມືອງນັ້ນ.
6 ຊົນຊາດທັງຫລາຍຫວາດຫວັ່ນຕົກໃຈ ລາຊະອານາຈັກປັ່ນປ່ວນ
ພຣະອົງຊົງສົ່ງພຣະສຸລະສຽງອັນດັງອອກມາ ແຜ່ນດິນກໍລະລາຍໄປໝົດ.
7 ພຣະຜູ້ເປັນເຈົ້າແຫ່ງຈັກກະວານຊົງສະຖິດຢູ່ກັບພວກເຮົາ
ພຣະເຈົ້າຂອງຢາໂຄບຊົງເປັນທີ່ເພິ່ງຂອງພວກເຮົາ.

*ເຊລາ*

8 ຈົ່ງມາເບິ່ງສິ່ງອັດສະຈັນທີ່ພຣະຜູ້ເປັນເຈົ້າຊົງກະທຳໃນໂລກນີ້.
9 ພຣະອົງຊົງກະທຳໃຫ້ເສິກສົງຄາມໃນໂລກນີ້ສະຫງົບລົງ
ພຣະອົງຊົງຫັກຄັນທະນູ ທຳລາຍຫອກ
ແລະເອົາແຜ່ນເຫລັກຕ້ານທານໂຍນເຂົ້າກອງໄຟ.
10 ພຣະອົງຊົງກ່າວວ່າ, "ພວກເຈົ້າຈົ່ງຢຸດສູ້ຮົບກັນ
ແລະຈົ່ງຮູ້ວ່າ ເຮົາແມ່ນພຣະເຈົ້າຜູ້ຍິ່ງໃຫຍ່ເໜືອໂລກນີ້
ແລະທ່າມກາງຊົນຊາດທັງຫລາຍ."
11 ພຣະຜູ້ເປັນເຈົ້າແຫ່ງຈັກກະວານຊົງສະຖິດຢູ່ກັບພວກເຮົາ
ພຣະເຈົ້າຂອງຢາໂຄບຊົງເປັນທີ່ເພິ່ງຂອງພວກເຮົາ.

*ເຊລາ*

# ບົດທີ 47

## ຄຳຊັກຊວນແກ່ບັນດາປະຊາຊາດ

*ເຖິງຫົວໜ້ານັກຮ້ອງ ເພງສັນລະເສີນຂອງຄະນະໂກຣາ*

1 ເບິ່ງກ່ອນ ຊົນຊາດທັງຫລາຍ ຈົ່ງຕົບມື
ຈົ່ງໂຫ່ຮ້ອງຖວາຍ ພຣະເຈົ້າ ດ້ວຍສຽງໄຊໂຍ
2 ເພາະ ພຣະຜູ້ເປັນເຈົ້າ ອົງຜູ້ສູງສຸດເປັນທີ່ໜ້າຢ້ານຢຳເກງ
ເປັນພຣະມະຫາກະສັດຜູ້ຍິ່ງໃຫຍ່ເໜືອແຜ່ນດິນໂລກທັງໝົດ
3 ພຣະອົງຈະປາບປາມຊົນຊາດທັງຫລາຍໃຫ້ຢູ່ພາຍໃຕ້ເຮົາ
ແລະຊາວປະເທດທັງຫລາຍໃຫ້ຢູ່ພາຍໃຕ້ຕີນຂອງເຮົາ
4 ພຣະອົງຈະເລືອກມໍລະດົກຂອງເຮົາໃຫ້ເຮົາ
ເປັນສິ່ງພູມໃຈຂອງ ຢາໂຄບ ທີ່ພຣະອົງຮັກ

*ເຊລາ*

5 ພຣະຜູ້ເປັນເຈົ້າ ສະເດັດຂຶ້ນດ້ວຍສຽງໂຫ່ຮ້ອງ
ພຣະຜູ້ເປັນເຈົ້າ ສະເດັດຂຶ້ນດ້ວຍສຽງແກ
6 ຈົ່ງຮ້ອງເພງສັນລະເສີນຖວາຍ ພຣະເຈົ້າ ຈົ່ງຮ້ອງເພງສັນລະເສີນເຖີດ
ຈົ່ງຮ້ອງເພງສັນລະເສີນຖວາຍພຣະມະຫາກະສັດຂອງເຮົາ
ຈົ່ງຮ້ອງເພງສັນລະເສີນເຖີດ
7 ເພາະ ພຣະເຈົ້າ ເປັນກະສັດເໜືອແຜ່ນດິນໂລກທັງໝົດ
ຈົ່ງຮ້ອງເພງສັນລະເສີນດ້ວຍຄວາມເຂົ້າໃຈ

8 ພຣະເຈົ້າ ຄອບຄອງເໜືອນານາປະຊາຊາດ
ພຣະເຈົ້າ ປະທັບເທິງພຣະທີ່ນັ່ງແຫ່ງຄວາມບໍລິສຸດຂອງພຣະອົງ
9 ບັນດາເຈົ້ານາຍຂອງຊົນຊາດທັງຫລາຍປະຊຸມກັນ
ເປັນປະຊາຊົນຂອງ ພຣະເຈົ້າ ແຫ່ງ ອັບຣາຮາມ
ເພາະບັນດາໂລ່ຂອງແຜ່ນດິນໂລກເປັນຂອງ ພຣະເຈົ້າ
ພຣະອົງເປັນທີ່ຍົກຍໍຢ່າງສູງ

# ບົດທີ 48

## ພູເຂົາຊີໂອນຈະເປັນນະຄອນຂອງອົງພຣະຜູ້ເປັນເຈົ້າ

*ເພງສັນລະເສີນຂອງຄະນະໂກຣາ*

1 ພຣະຜູ້ເປັນເຈົ້ານັ້ນຍິ່ງໃຫຍ່ ແລະສົມຄວນຈະສັນລະເສີນຢ່າງຍິ່ງໃຫຍ່
ໃນນະຄອນແຫ່ງ ພຣະເຈົ້າ ຂອງເຮົາ
ເທິງພູເຂົາແຫ່ງຄວາມບໍລິສຸດຂອງພຣະອົງ
2 ເບິ່ງຂຶ້ນໄປກໍງາມ ເປັນຄວາມຊື່ນບານຂອງແຜ່ນດິນໂລກທັງໝົດ

ຄືພູເຂົາຊີໂອນດ້ານທິດເໜືອ ຊຶ່ງເປັນນະຄອນຂອງພຣະມະຫາກະສັດ
3 ພາຍໃນປ້ອມຂອງນະຄອນກໍຮູ້ວ່າພຣະເຈົ້າເປັນກຳແພງທີ່ໝັ້ນຄົງ

4 ເພາະເບິ່ງແມ ກະສັດຊຸມນຸມກັນແລ້ວສະເດັດໄປນຳກັນ
5 ເມື່ອພວກເພິ່ນເຫັນນະຄອນນັ້ນ ກໍພາກັນປະຫລາດໃຈ
ເພິ່ນເປັນທຸກ ແລ້ວກໍຕື່ນໜີໄປ
6 ໃນບ່ອນນັ້ນຕ່າງກໍຢ້ານຢ່າງໃຫຍ່ ມີຄວາມເຈັບປວດຢ່າງຍິ່ງ
ຄືຜູ້ຍິງກຳລັງເກີດລູກ
7 ພຣະອົງຕີທຳລາຍກຳປັ່ນແຫ່ງຕາຊິດດ້ວຍລົມຕາເວັນອອກ
8 ເຮົາໄດ້ຍິນຢ່າງໃດ ເຮົາກໍໄດ້ເຫັນຢ່າງນັ້ນ
ໃນນະຄອນແຫ່ງພຣະຜູ້ເປັນເຈົ້າຈອມໂຍທາ
ໃນນະຄອນແຫ່ງພຣະເຈົ້າຂອງເຮົາ ຊຶ່ງພຣະເຈົ້າຈະສະຖາປະນາໄວ້ເປັນນິດ

*ເຊລາ*

9 ຂ້າແດ່ພຣະເຈົ້າ ຂ້ານ້ອຍທັງຫລາຍຄຶດເຖິງຄວາມເມດຕາຂອງພຣະອົງ
ໃນທ່າມກາງພຣະວິຫານຂອງພຣະອົງ
10 ຂ້າແດ່ພຣະເຈົ້າ ພຣະນາມຂອງພຣະອົງໄປເຖິງທີ່ສຸດ
ປາຍແຜ່ນດິນໂລກຢ່າງໃດ ຄຳສັນລະເສີນພຣະອົງກໍໄປເຖິງຢ່າງນັ້ນ
ພຣະຫັດຂວາຂອງພຣະອົງເຕັມໄປດ້ວຍຄວາມຊອບທຳ
11 ຂໍພູເຂົາຊີໂອນຈົ່ງຊົມຊື່ນຍິນດີ ຂໍທິດາແຫ່ງຢູດາຈົ່ງຍິນດີ
ເພາະເຫດຄຳຕັດສິນຂອງພຣະອົງ

12 ຈົ່ງຍ່າງຮອບຊີໂອນໄປໃຫ້ຮອບເຖີດ ຈົ່ງນັບຫໍຄອຍຂອງຊີໂອນ
13 ພິຈາລະນາເບິ່ງກຳແພງຂອງນາງໃຫ້ດີ ຈົ່ງກວດກາປ້ອມຂອງນາງ
ເພື່ອທ່ານຈະໄດ້ບອກຄົນລຸ້ນຫລັງຕໍ່ໄປ
14 ວ່ານີ້ຄືພຣະເຈົ້າ ເປັນພຣະເຈົ້າຂອງເຮົາເປັນນິດ
ພຣະອົງຈະເປັນຜູ້ນຳຂອງເຮົາຈົນເຖິງເວລາສິ້ນຊີວິດ

# ບົດທີ 49

## ການວາງໃຈໃນພຣະເຈົ້າສຳລັບການເປັນຂຶ້ນມາໃໝ່

*ເຖິງຫົວໜ້ານັກຮ້ອງ ເພງສັນລະເສີນຂອງຄະນະໂກຣາ*

1 ເບິ່ງກ່ອນຊາດທັງຫລາຍ ຈົ່ງຟັງຂໍ້ຄວາມນີ້ ຊາວໂລກທັງປວງເອີຍ
ຈົ່ງຫງ່ຽງຫູຟັງ
2 ທັງຜູ້ນ້ອຍຜູ້ໃຫຍ່ ທັງເສດຖີ ແລະຄົນຍາກຈົນ
3 ປາກຂອງຂ້ານ້ອຍຈະເຜີຍປັນຍາ
ຄວາມຄຶດໃນຈິດໃຈຂ້ານ້ອຍຄືຄວາມເຂົ້າໃຈ

4 ຂ້ານ້ອຍຈະຫງ່ຽງຫູຟັງຄຳອຸປະມາ
ຂ້ານ້ອຍຈະແກ້ຖ້ອຍຄຳອັນເລິກລັບຂອງຂ້ານ້ອຍ
ໃຫ້ເຂົ້າກັບສຽງພິນຄູ່

5 ເປັນຫຍັງຂ້ານ້ອຍຈຶ່ງຢ້ານໃນຄາວທຸກຍາກລຳບາກ
ເມື່ອຄວາມຊົ່ວຊ້າແຫ່ງຜູ້ຂົ່ມເຫັງອ້ອມຕົວຂ້ານ້ອຍ
6 ຄົນຜູ້ວາງໃຈໃນຊັບສົມບັດຂອງຕົນ
ແລະອວດອ້າງຄວາມຮັ່ງມີອັນອຸດົມຂອງຕົນ
7 ແນ່ແທ້ບໍ່ມີຄົນໃດໄຖ່ພີ່ນ້ອງຂອງຕົນໄດ້
ຫລືຖວາຍຄ່າຊີວິດຂອງຕົນແກ່ພຣະເຈົ້າ
8 (ເພາະຄ່າໄຖ່ຊີວິດຂອງຕົນນັ້ນແພງ ແລະບໍ່ເຄີຍພໍເລີຍ)
9 ທີ່ລາວຈະມີຊີວິດເລື້ອຍໄປເປັນນິດ ແລະບໍ່ຕ້ອງເຫັນຄວາມເປື່ອຍເນົ່າ

10 ເອີ ລາວເຫັນວ່າ ເຖິງນັກປາດກໍຍັງຕາຍ
ຄົນໂງ່ແລະຄົນໂຫດຮ້າຍກໍຕ້ອງຈິບຫາຍຄືກັນ
ແລະປະຊັບສົມບັດຂອງຕົນໄວ້ໃຫ້ຄົນອື່ນ
11 ຈິດໃຈພວກເຂົາຄິດວ່າວັງວານຂອງຕົນຈະດຳລົງຢູ່ເປັນນິດ
ແລະທີ່ຢູ່ຂອງພວກເຂົາເຖິງທຸກຊົ່ວອາຍຸນີ້ຈົນເຖິງຊົ່ວອາຍຸໜ້າ
ເຖິງພວກເຂົາເຄີຍເອີ້ນທີ່ດິນຂອງຕົນຕາມຊື່ຂອງຕົນ
12 ມະນຸດຈະຄົງຊີບໃນຍົດສັກຂອງຕົນບໍ່ໄດ້
ພວກເຂົາກໍເປັນເໝືອນສັດເດຍລະສານທີ່ຈິບຫາຍ
13 ການດຳເນີນຊີວິດຂອງພວກເຂົາຄືຄວາມໂງ່ຈ້າ
ເຖິງປານນັ້ນ ຄົນຊົ່ວອາຍຸຕໍ່ໄປກໍພໍໃຈກັບຄຳກ່າວຂອງພວກເຂົາ

*ເຊລາ*

14 ດັ່ງແກະ ພວກເຂົາຖືກກຳນົດໄວ້ໃຫ້ແກ່ຄວາມຕາຍ
ມັດຈຸລາດຈະເປັນຜູ້ລ້ຽງຂອງພວກເຂົາ
ຄົນທ່ຽງທຳຈະມີອຳນາດເໜືອພວກເຂົາທັງຫລາຍໃນເວລາເຊົ້າ
ແລະຄວາມງາມຂອງພວກເຂົາຈະເປື່ອຍໝົດໄປໃນຄວາມຕາຍ
ຊຶ່ງຄືທີ່ອາໄສຂອງພວກເຂົາ
15 ແຕ່ພຣະເຈົ້າຈະໄຖ່ຈິດວິນຍານຂອງຂ້ານ້ອຍ
ຈາກລິດອຳນາດຂອງຄວາມຕາຍ ເພາະພຣະອົງຈະຮັບຂ້ານ້ອຍໄວ້

*ເຊລາ*

16 ທ່ານຢ່າຢ້ານເມື່ອຜູ້ໜຶ່ງຮັ່ງມີຂຶ້ນ
ເມື່ອສະຫງ່າລາສີຂອງເຮືອນຂອງລາວເພີ່ມຂຶ້ນ
17 ເພາະເມື່ອລາວຕາຍ ລາວຈະບໍ່ເອົາຫຍັງໄປເລີຍ

ສະຫງ່າລາສີຂອງລາວຈະບໍ່ລົງໄປຕາມລາວ
18 ເຖິງວ່າເມື່ອລາວເປັນຢູ່ ລາວຖືວ່າຕົວລາວສຸກສະບາຍ
ແລະຄົນອື່ນຈະຍົກຍ້ອງທ່ານເມື່ອທ່ານຈະເລີນຂຶ້ນ
19 ລາວຈະໄປຢູ່ກັບພວກບັນພະບູລຸດຂອງລາວ
ຜູ້ຊຶ່ງຈະບໍ່ເຫັນຄວາມສະຫວ່າງອີກ
20 ມະນຸດຊຶ່ງມີກຽດສັກສີ ແຕ່ຂາດຄວາມເຂົ້າໃຈ
ລາວກໍເປັນເໝືອນສັດເດຍລະສານທີ່ຈິບຫາຍໄປ

# ບົດທີ 50

## ການນະມັດສະການອັນແທ້ຈິງ

1 ພຣະຜູ້ເປັນເຈົ້າອົງມີອຳນາດຍິ່ງໃຫຍ່ຊົງກ່າວໄວ້
ພຣະອົງຊົງເອີ້ນຄົນທົ່ວໂລກນີ້
ແຕ່ທິດຕາເວັນອອກເຖິງທິດຕາເວັນຕົກ.
2 ພຣະອົງຊົງສົ່ງແສງສະຫວ່າງຈາກເມືອງຊີໂອນ
ຊຶ່ງເປັນເມືອງອຸດົມສົມບູນດ້ວຍຄວາມງາມ.
3 ພຣະເຈົ້າຂອງພວກເຮົາຈະບໍ່ຊົງສະເດັດມາຢ່າງມິດໆ
ແຕ່ວ່າຊີ່ພຣະພັກຂອງພຣະອົງມີແປວໄຟຮ້ອນແຮງກ້າ
ແລະອ້ອມຮອບພຣະອົງ ມີລົມພາຍຸທີ່ຮ້າຍແຮງທີ່ສຸດ.
4 ພຣະອົງຊົງເອີ້ນເອົາຟ້າສະຫວັນ ແລະແຜ່ນດິນໂລກເປັນພະຍານ
ໃຫ້ເຫັນ ເມື່ອພຣະອົງຊົງຕັດຕຽນໄພ່ພົນຂອງພຣະອົງ.
5 ພຣະອົງຊົງກ່າວວ່າ ຈົ່ງທ້ອນໂຮມຄົນທ່ຽງທຳມາຫາເຮົາ
ຄືພວກທີ່ເຮັດຄຳໝັ້ນສັນຍາກັບເຮົາໂດຍການຖວາຍເຄື່ອງບູຊາ.”
6 ຟ້າສະຫວັນທັງຫລາຍຮ້ອງປະກາດວ່າພຣະເຈົ້າຊົງທ່ຽງທຳ
ເພາະພຣະອົງຊົງຕັດສິນໂດຍພຣະອົງເອງ.

*ເຊລາ*

7 ໄພ່ພົນທັງຫລາຍຂອງເຮົາຈົ່ງຟັງເທີ້ນ ເຮົາຈະກ່າວວ່າ
ພວກອິສຣາເອນເອີຍ ເຮົາຈະເປັນພະຍານຕໍ່ສູ້ພວກເຈົ້າ
ເຮົາເປັນພຣະເຈົ້າຂອງພວກເຈົ້າ.
8 ເຮົາບໍ່ໄດ້ຕິຕຽນພວກເຈົ້າຍ້ອນເຄື່ອງບູຊາ
ແລະການເຜົາຖວາຍເຄື່ອງບູຊາທີ່ພວກເຈົ້ານຳມາ
ໃຫ້ເຮົາເລື້ອຍໆນັ້ນ.
9 ເຮົາບໍ່ຕ້ອງການງົວເຖິກ ຫລືແບ້ຈາກຄອກສັດຂອງພວກເຈົ້າ.
10 ເພາະວ່າສັດປ່າທັງໝົດ

ພ້ອມທັງຝູງງົວຢູ່ເທິງພູພັນໜ່ວຍເປັນຂອງເຮົາ.
11 ນົກ ແລະປາທັງຫລາຍພ້ອມດ້ວຍທຸກສິ່ງທີ່ມີຊີວິດຢູ່ຕາມທົ່ງນາ
ກໍເປັນຂອງເຮົາ.
12 ຖ້າວ່າເຮົາຫິວເຂົ້າ ເຮົາຈະບໍ່ບອກພວກເຈົ້າ
ເພາະວ່າໂລກນີ້ພ້ອມທັງທຸກໆສິ່ງໃນໂລກນີ້ເປັນຂອງເຮົາ.
13 ເຮົາບໍ່ກິນຊີ້ນງົວ ຫລືດື່ມເລືອດແບ້.
14 ຈົ່ງຖວາຍບູຊາຂອບພຣະຄຸນພຣະເຈົ້າ
ແລະຖວາຍແດ່ພຣະຜູ້ເປັນເຈົ້າອົງຍິ່ງໃຫຍ່ຕາມທີ່ເຈົ້າໄດ້ສັນຍາໄວ້.
15 ເວລາຖືກຄວາມທຸກລຳບາກຈົ່ງຮ້ອງຫາເຮົາ
ເຮົາຈະຊ່ອຍເຈົ້າໃຫ້ພົ້ນ ແລະເຈົ້າຈະສັນລະເສີນເຮົາ.

16 ແຕ່ພຣະເຈົ້າຊົງກ່າວຕໍ່ຄົນຊົ່ວຮ້າຍວ່າ
ເປັນຫຍັງເຈົ້າຈຶ່ງທ່ອງຂຶ້ນໃຈເອົາຂໍ້ຄຳສັ່ງຂອງເຮົາ
ແລະເວົ້າເຖິງຄຳໝັ້ນສັນຍາຂອງເຮົາ.
17 ເຖິງປະຕິເສດບໍ່ຍອມໃຫ້ເຮົາຕິຕຽນພວກເຈົ້າ
ແລະບໍ່ຍອມຮັບເອົາຄຳສັ່ງຂອງເຮົາ.
18 ເມື່ອພວກເຈົ້າພົບເຫັນຄົນຂີ້ລັກ
ພວກເຈົ້າກໍກາຍເປັນໝູ່ຂອງລາວ
ແລະພວກເຈົ້າຄົບຄ້າສະມາຄົມກັບຄົນປະພຶດຜິດປະເວນີ.
19 ພວກເຈົ້າເວົ້າແຕ່ຄວາມຊົ່ວຢູ່ເລື້ອຍໆ
ພວກເຈົ້າບໍ່ເຄີຍຄິດພິຈາລະນາໃນການເວົ້າຕົວະ.
20 ພວກເຈົ້າຕຽມຫາແຕ່ເລື່ອງໃສ່ອ້າຍນ້ອງພວກເຈົ້າເອງ
ແລະຊອກຫາຄວາມຜິດໃສ່ພວກເຂົາ.
21 ພວກເຈົ້າໄດ້ເຮັດທຸກສິ່ງເຫລົ່ານີ້ ແຕ່ເຮົາບໍ່ເວົ້າຫຍັງ
ດັ່ງນັ້ນ ພວກເຈົ້າຈຶ່ງຄິດວ່າເຮົາຄິດຄືກັນກັບພວກເຈົ້າ
ດຽວນີ້ເຮົາຈະຕິຕຽນພວກເຈົ້າ
ແລະນຳເອົາເລື່ອງເຫລົ່ານີ້ມາສູ່ພວກເຈົ້າ.

22 ພວກທີ່ບໍ່ເອົາໃຈໃສ່ກັບເຮົາ ຈົ່ງຟັງເທີ້ນ
ເຮົາຈະທຳລາຍພວກເຈົ້າ
ແລະບໍ່ມີຜູ້ໃດຊ່ອຍພວກເຈົ້າໃຫ້ພົ້ນໄພນີ້ໄດ້.
23 ຜູ້ທີ່ຖວາຍບູຊາຂອບພຣະຄຸນ ເປັນຜູ້ທີ່ໃຫ້ກຽດເຮົາ
ແລະເຮົາຈະຊ່ອຍຄົນທັງປວງທີ່ຟັງຄວາມເຮົາໃຫ້ພົ້ນຢ່າງແນ່ນອນ.

# ບົດທີ 51

## ການອ້ອນວອນຂໍອະໄພໂທດ

1 ພຣະເຈົ້າຂ້າ ຍ້ອນຄວາມຮັກອັນໝັ້ນຄົງຂອງພຣະອົງ
ຂໍຊົງໂຜດເມດຕາຂ້ານ້ອຍເທີ້ນ
ຍ້ອນຄວາມເມດຕາອັນຍິ່ງໃຫຍ່ຂອງພຣະອົງ
ຂໍຊົງປັດເປົ່າຄວາມຜິດຂອງຂ້ານ້ອຍອອກໄປດ້ວຍ.
2 ຂໍຊົງຊໍາລະລ້າງຄວາມຊົ່ວຂອງຂ້ານ້ອຍໃຫ້ສູນສິ້ນໄປ
ແລະເຮັດໃຫ້ຂ້ານ້ອຍຂາວສະອາດຈາກຄວາມຜິດຂອງຂ້ານ້ອຍ.
3 ຂ້ານ້ອຍຍອມຮັບເອົາຄວາມຜິດ
ຂ້ານ້ອຍຮູ້ຈັກຄວາມຜິດຂອງຂ້ານ້ອຍຕະຫລອດມາ.
4 ຂ້ານ້ອຍໄດ້ເຮັດຜິດຕໍ່ສູ້ພຣະອົງເທົ່ານັ້ນ
ແລະຂ້ານ້ອຍໄດ້ເຮັດຕໍ່ສາຍຕາຂອງພຣະອົງ
ສະນັ້ນ ພຣະອົງຊົງເປັນຝ່າຍຖືກຕ້ອງທີ່ຕັດສິນຂ້ານ້ອຍ.
5 ຂ້ານ້ອຍຊົ່ວ ແລະເຕັມໄປດ້ວຍຄວາມຜິດຕັ້ງແຕ່ມື້ເກີດມາ.

6 ຈິດໃຈທີ່ເຕັມດ້ວຍຄວາມສັດຊື່ເປັນສິ່ງທີ່ພຣະອົງຊົງພໍພຣະໄທ
ຂໍພຣະອົງຊົງໃຫ້ຈິດໃຈຂອງຂ້ານ້ອຍເຕັມໄປ
ດ້ວຍສະຕິປັນຍາຂອງພຣະອົງ.
7 ຂໍຊົງປັດເຂ່ຍຄວາມບາບຂອງຂ້ານ້ອຍອອກໄປ
ເພື່ອຂ້ານ້ອຍຈະຂາວສະອາດສົດໃສ
ຂໍພຣະອົງຊົງຊໍາລະລ້າງຂ້ານ້ອຍ ແລະຂ້ານ້ອຍກໍຂາວກວ່ານວນຝ້າຍ.
8 ຂໍຊົງໂຜດໃຫ້ຂ້ານ້ອຍໄດ້ຍິນສຽງອັນມ່ວນຊື່ນ ແລະຍິນດີ
ເຖິງແມ່ນວ່າພຣະອົງໄດ້ຢຽບຢໍ່າທໍາລາຍຂ້ານ້ອຍກໍຕາມ
ຂ້ານ້ອຍກໍຍັງຈະມີຄວາມສຸກຢູ່ອີກ.
9 ຂໍພຣະອົງຢ່າຫລຽວເບິ່ງຄວາມຜິດຂອງຂ້ານ້ອຍ
ແລະກໍາຈັດຄວາມຊົ່ວທັງໝົດຂອງຂ້ານອຍອອກໄປ.
10 ພຣະເຈົ້າຂ້າ ຂໍຊົງສ້າງຈິດໃຈຂ້ານ້ອຍໃຫ້ບໍລິສຸດ
ຂໍພຣະອົງຊົງສວມຈິດວິນຍານທີ່ສັດຊື່ໃຫ້ແກ່ຂ້ານ້ອຍ.
11 ຂໍຢ່າຂັບໄລ່ຂ້ານ້ອຍຈາກພຣະພັກຂອງພຣະອົງ
ແລະຢ່າຖອນເອົາພຣະວິນຍານບໍລິສຸດຂອງພຣະອົງໄປຈາກຂ້ານ້ອຍ.
12 ຂໍພຣະອົງຊົງປະທານຄວາມປິຕິຍິນດີອີກ
ຄືຄວາມຍິນດີທີ່ມາຈາກຄວາມຊ່ອຍໃຫ້ພົ້ນຂອງພຣະອົງ
ແລະຂໍຊົງເຮັດໃຫ້ຈິດວິນຍານຂອງຂ້ານ້ອຍເຊື່ອຟັງ.
13 ແລ້ວຂ້ານ້ອຍຈະສອນພຣະດໍາລັດຂອງພຣະອົງແກ່ຜູ້ທີ່ເຮັດຜິດ

ເພື່ອພວກເຂົາຈະກັບຄືນມາຫາພຣະອົງ.

14 ພຣະເຈົ້າພຣະຜູ້ຊ່ອຍຂອງຂ້ານ້ອຍ ຂໍຊົງໄວ້ຊີວິດຂ້ານ້ອຍ
ແລ້ວຂ້ານ້ອຍຈະປະກາດຄວາມຊອບທຳຂອງພຣະອົງດ້ວຍຄວາມຍິນດີ.
15 ຂ້າແດ່ພຣະຜູ້ເປັນເຈົ້າຂໍຊົງຊ່ອຍໃຫ້ຂ້ານ້ອຍຮູ້ຈັກສັນລະເສີນ
ແລ້ວຂ້ານ້ອຍຈະສັນລະເສີນພຣະອົງ.
16 ພຣະອົງບໍ່ຊົງຕ້ອງການເຄື່ອງຖວາຍບູຊາ
ຖ້າຂ້ານ້ອຍຖວາຍ ພຣະອົງກໍບໍ່ຊົງຍິນດີຮັບເອົາ.
17 ພຣະເຈົ້າຂ້າ ການຖວາຍບູຊາແດ່ພຣະອົງ
ແມ່ນຖວາຍຈິດໃຈທີ່ເຊື່ອຟັງ
ພຣະອົງຈະບໍ່ປະຖິ້ມຜູ້ທີ່ມີຈິດໃຈອ່ອນນ້ອມຍອມຟັງ.

18 ພຣະເຈົ້າຂ້າ ຂໍຊົງເມດຕາ ແລະຊ່ອຍເຫລືອເມືອງຊີໂອນດ້ວຍ
ແລະຂໍຊົງສ້າງກຳແພງເມືອງເຢຣູຊາເລັມຂຶ້ນໃໝ່.
19 ແລ້ວພຣະອົງຈະຊົງຍິນດີຮັບເອົາ
ເຄື່ອງເຜົາຖວາຍບູຊາຕ່າງໆ ທີ່ຖືກຕ້ອງ
ແລະງົວທີ່ຖືກເຜົາຖວາຍບູຊາເທິງແທ່ນບູຊາຂອງພຣະອົງ.

# ບົດທີ 52

## ດາວິດຂອບພຣະຄຸນ

*ເຖິງຫົວໜ້ານັກຮ້ອງ ມັດຄີນບົດໜຶ່ງ. ເພງສັນລະເສີນຂອງດາວິດ*
*ເມື່ອໂດເອັກຄົນເອໂດມມາທູນຊາອູນວ່າ "ດາວິດໄດ້ມາທີ່ເຮືອນອາຮີເມເລັກ"*

1 ເຮີຍ ເຈົ້າຜູ້ແຂງແຮງ ເຫດໃດເຈົ້າຈຶ່ງໂອ້ອວດໃນການຊົ່ວ
ຄວາມເມດຕາຂອງພຣະເຈົ້າດຳລົງຢູ່ຕັ້ງແຕ່ເຊົ້າຮອດຄ່ຳ
2 ລີ້ນຂອງເຈົ້າອອກອຸບາຍປະສົງຮ້າຍ ແລະຫລອກລວງເໝືອນຢ່າງມີດແຖຄົມ
3 ເຈົ້າຮັກຊົ່ວຫລາຍກວ່າດີ
ແລະການຂີ້ຕົວະຫລາຍກວ່າເວົ້າຄວາມຊອບທຳ

*ເຊລາ*

4 ເຈົ້າຮັກທຸກຄຳທີ່ທຳລາຍ ໂອ ລີ້ນແຫ່ງການຫລອກລວງ
5 ແຕ່ພຣະເຈົ້າຈະທຳລາຍເຈົ້າລົງເປັນນິດ
ພຣະອົງຈະຊ່ວຍ ແລະດຶງເຈົ້າຈາກທີ່ຢູ່ອາໄສຂອງເຈົ້າ
ພຣະອົງຈະຖອນຮາກເຈົ້າຈາກແຜ່ນດິນຂອງຄົນເປັນ

*ເຊລາ*

6 ຄົນຊອບທຳຈະເຫັນ ແລະຢຳເກງ
ແລະຈະຫົວຂວັນເຍາະເຍີ້ຍລາວ ກ່າວວ່າ

7 “ຈົ່ງເບິ່ງບຸລຸດຜູ້ບໍ່ໃຫ້ພຣະເຈົ້າເປັນກຳລັງຂອງຕົນ
ແຕ່ໄວ້ໃຈໃນຄວາມຮັ່ງມີອັນອຸດົມຂອງລາວ ລາວເສີມກຳລັງຕົວເອງ
ໃນຄວາມຊົ່ວຮ້າຍຂອງຕົນ”

8 ຝ່າຍຂ້ານ້ອຍເປັນເໝືອນຕົ້ນໝາກກອກເທດຂຽວສົດ
ໃນພຣະວິຫານຂອງພຣະເຈົ້າຂ້ານ້ອຍວາງໃຈ
ໃນຄວາມເມດຕາຂອງພຣະເຈົ້າເປັນນິດ
9 ຂ້ານ້ອຍຈະສັນລະເສີນພຣະອົງເປັນນິດ
ເພາະພຣະອົງໄດ້ກະທຳເຊັ່ນນັ້ນ
ຂ້ານ້ອຍຈະລໍຖ້າພຣະນາມຂອງພຣະອົງ
ເພາະເປັນພຣະນາມປະເສີດຕໍ່ໜ້າຜູ້ບໍລິສຸດຂອງພຣະອົງ

# ບົດທີ 53

## ຄວາມຊົ່ວຊ້າຂອງມະນຸດ

*ເຖິງຫົວໜ້ານັກຮ້ອງ ຕາມທຳນອງມາຮາລາດ ມັດຄີນບົດໜຶ່ງ*
*ເພງສັນລະເສີນຂອງດາວິດ*

1 ຄົນໂງ່ຄິດຢູ່ໃນໃຈຂອງຕົນວ່າ “ບໍ່ມີພຣະເຈົ້າ” ພວກເຂົາທັງຫລາຍກໍຊົ່ວຊ້າລົງ
ກະທຳຄວາມຊົ່ວຊ້າທີ່ໜ້າກຽດຊັງ ບໍ່ມີຈັກຄົນດຽວທີ່ເຮັດດີ
2 ພຣະເຈົ້າເບິ່ງລົງມາຈາກຟ້າສະຫວັນ ເບິ່ງບຸດທັງຫລາຍຂອງມະນຸດວ່າ
ຈະມີຄົນໃດແດ່ທີ່ເຂົ້າໃຈ ທີ່ຊອກສະແຫວງຫາພຣະເຈົ້າ
3 ພວກເຂົາທັງຫລາຍກໍທົດຖອຍໄປໝົດ ພວກເຂົາທັງຫລາຍກໍຊົ່ວຊ້າລົງຄືກັນ
ບໍ່ມີຈັກຄົນດຽວທີ່ເຮັດດີ ບໍ່ມີເລີຍ

4 ບັນດາຜູ້ທີ່ກະທຳຄວາມຊົ່ວຊ້າບໍ່ມີຄວາມຮູ້ຫລື
ຄືຜູ້ທີ່ກິນປະຊາຊົນຂອງເຮົາເໝືອນຢ່າງກິນເຂົ້າໜົມ ແລະບໍ່ຮ້ອງທູນພຣະເຈົ້າ
5 ພວກເຂົາທັງຫລາຍຢູ່ບ່ອນນັ້ນຢ່າງໜ້າຢ້ານກົວ ໃນບ່ອນຊຶ່ງບໍ່ໜ້າມີຄວາມຢ້ານ
ເພາະພຣະເຈົ້າໃຫ້ກະດູກຂອງຄົນທີ່ຕັ້ງຄ້າຍຕໍ່ສູ້ເຈົ້າ
ພຣະອົງເຮັດໃຫ້ພວກເຂົາທັງຫລາຍໄດ້ຮັບຄວາມອັບອາຍ
ເພາະພຣະເຈົ້າກຽດຊັງພວກເຂົາ

6 ຂໍການຊ່ວຍໃຫ້ລອດພົ້ນເພື່ອອິສຣາເອນມາຈາກຊີໂອນເຖີດ
ເມື່ອພຣະເຈົ້າໃຫ້ພວກຊະເລີຍແຫ່ງປະຊາຊົນຂອງພຣະອົງ
ກັບສູ່ສະພາບເດີມຢາໂຄບຈະດີໃຈອິສຣາເອນຈະຍິນດີ

# ບົດທີ 54

## ດາວິດທູນຂໍການຊ່ວຍໃຫ້ພົ້ນໄພ

*ເຖິງຫົວໜ້ານັກຮ້ອງໃຊ້ເຄື່ອງສາຍ ມັດຄິນບົດໜຶ່ງ ເພງສັນລະເສີນຂອງດາວິດ*
*ເມື່ອພວກຊີເຟໄປທູນຊາອູນວ່າ "ດາວິດເຊື່ອງຕົວຢູ່ທ່າມກາງເຮົາບໍ່ແມ່ນຫລື"*

1 ຂ້າແດ່ພຣະເຈົ້າ ຂໍຊ່ວຍຂ້ານ້ອຍໃຫ້ລອດພົ້ນດ້ວຍພຣະນາມຂອງພຣະອົງ
ແລະແກ້ແຄ້ນແທນຂ້ານ້ອຍດ້ວຍອານຸພາບຂອງພຣະອົງ
2 ຂ້າແດ່ພຣະເຈົ້າ ຂໍຮັບຟັງຄຳອະທິຖານຂອງຂ້ານ້ອຍ
ຂໍຫງ່ຽງພຣະກັນຮັບຟັງຖ້ອຍຄຳຈາກປາກຂອງຂ້ານ້ອຍ
3 ເພາະຄົນແປກໜ້າໄດ້ລຸກຂຶ້ນສູ້ຂ້ານ້ອຍ
ຜູ້ບີບບັງຄັບຊອກຫາຊີວິດຂອງຂ້ານ້ອຍ
ພວກເຂົາບໍ່ໄດ້ຕັ້ງພຣະເຈົ້າໄວ້ຕໍ່ໜ້າພວກເຂົາ

*ເຊລາ*

## ດາວິດວາງໃຈໃນພຣະເຈົ້າ

4 ເບິ່ງແມພຣະເຈົ້າເປັນຜູ້ຊ່ວຍຂອງຂ້ານ້ອຍ
ອົງພຣະຜູ້ເປັນເຈົ້າເປັນຜູ້ຊ່ວຍຊີວິດຂອງຂ້ານ້ອຍໄວ້
5 ພຣະອົງຈະໃຫ້ການຊົ່ວຮ້າຍຂອງພວກສັດຕູ
ຂອງຂ້ານ້ອຍກັບສະໜອງພວກເຂົາເອງ
ຂໍຕັດພວກເຂົາອອກໂດຍຄວາມຈິງຂອງພຣະອົງ

6 ຂ້ານ້ອຍຈະຖວາຍສັດບູຊາຕາມໃຈສະໝັກແກ່ພຣະອົງ
ຂ້າແດ່ພຣະຜູ້ເປັນເຈົ້າ ຂ້ານ້ອຍຈະສັນລະເສີນພຣະນາມຂອງພຣະອົງ
ເພາະພຣະນາມນັ້ນປະເສີດ
7 ເພາະພຣະອົງຊ່ວຍຂ້ານ້ອຍໃຫ້ພົ້ນຈາກຄວາມທຸກຍາກລຳບາກທຸກຢ່າງ
ແລະໃນຕາຂອງຂ້ານ້ອຍເບິ່ງເຫັນພຣະປະສົງຂອງພຣະອົງ
ຕໍ່ພວກສັດຕູຂອງຂ້ານ້ອຍນັ້ນສຳເລັດ

# ບົດທີ 55

## ຄວາມຢ້ານ ແລະຄວາມສະທ້ານຫວັ່ນໄຫວມາເໜືອດາວິດ

*ເຖິງຫົວໜ້ານັກຮ້ອງໃຊ້ເຄື່ອງສາຍ ມັດຄິນບົດໜຶ່ງ ເພງສັນລະເສີນຂອງດາວິດ*

1 ຂ້າແດ່ພຣະເຈົ້າ ຂໍຫງ່ຽງພຣະກັນຮັບຟັງຄຳອະທິຖານຂອງຂ້ານ້ອຍ
ຂໍຢ່າເຊື່ອງພຣະອົງຈາກຄຳອ້ອນວອນຂອງຂ້ານ້ອຍ
2 ຂໍໂຜດຮັບຟັງ ແລະຂໍຟັງຂ້ານ້ອຍ ຂ້ານ້ອຍໂສກເສົ້າ
ໃນເລື່ອງຮ້ອງທຸກຂອງຂ້ານ້ອຍ ຂ້ານ້ອຍຈຶ່ງສົ່ງສຽງຄວນຄາງ
3 ເພາະສຽງຂອງສັດຕູ ເພາະການບີບບັງຄັບຂອງຄົນຊົ່ວ

ເຫດວ່າພວກເຂົາຟ້ອງວ່າຂ້ານ້ອຍໄດ້ເຮັດຄວາມຊົ່ວຊ້າ
ແລະບົ່ມຄວາມກຽດຊັງຂ້ານ້ອຍໂດຍຄວາມຮ້າຍ
4 ຈິດໃຈຂອງຂ້ານ້ອຍທົນທຸກ ຢູ່ໃນຂ້ານ້ອຍ
ຄວາມຢ້ານກົວຂອງມັດຈຸລາດຕົກເໜືອຂ້ານ້ອຍ
5 ຄວາມຢ້ານ ແລະຄວາມສະທ້ານຫວັ່ນໄຫວມາເໜືອຂ້ານ້ອຍ
ຄວາມຄິດຢ້ານສັ່ນເຊັ່ນ ຖ້ວມຂ້ານ້ອຍ
6 ແລະຂ້ານ້ອຍກ່າວວ່າ “ໂອ ຂ້ານ້ອຍຢາກມີປີກເໝືອນນົກເຂົາ
ຈະໄດ້ບິນໜີໄປ ແລະຈະຢູ່ຢ່າງສະຫງົບ
7 ເບິ່ງແມ ຂ້ານ້ອຍຈະໄດ້ພະເນຈອນໄປໄກ
ຂ້ານ້ອຍຈະໄດ້ພັກຢູ່ໃນຖິ່ນແຫ້ງແລ້ງກັນດານ

*ເຊລາ*

8 ຂ້ານ້ອຍຈະຮີບໜີໄປຈາກລົມແດງ ແລະພາຍຸ”

## ດາວິດຂໍພຣະເຈົ້າໃຫ້ທຳລາຍພວກສັດຕູຂອງເພິ່ນ

9 ຂ້າແດ່ອົງພຣະຜູ້ເປັນເຈົ້າຂໍທຳລາຍ ແລະໃຫ້ພາສາຂອງພວກເຂົາຫຍຸ້ງໄປ
ເພາະຂ້ານ້ອຍເຫັນການຮຸນແຮງ ແລະການວຸ້ນວາຍທີ່ຢູ່ໃນນະຄອນ
10 ພວກເຂົາຍ່າງເທິງກຳແພງຮອບນະຄອນຢູ່ທັງກາງເວັນແລະກາງຄືນ
ແລະຄວາມຜິດບາບກັບຄວາມເສົ້າໂສກຢູ່ພາຍໃນນະຄອນ
11 ຄວາມຊົ່ວຊ້າມີຢູ່ທ່າມກາງນາງ ການຫລອກລວງ
ແລະການສໍ້ໂກງບໍ່ໜີໄປຈາກຖະໜົນຂອງນາງ

12 ເຫດວ່າຜູ້ທີ່ໄດ້ປະຈານຂ້ານ້ອຍ ບໍ່ແມ່ນຜູ້ທີ່ເປັນສັດຕູ
ຖ້າແມ່ນສັດຕູ ຂ້ານ້ອຍຈະອົດທົນໄດ້
ຜູ້ທີ່ຍົກຕົວຂຶ້ນດ້ວຍຈອງຫອງເພື່ອຕໍ່ສູ້ຂ້ອຍ
ບໍ່ແມ່ນຜູ້ທີ່ກຽດຊັງຂ້ານ້ອຍ
ຖ້າແມ່ນຜູ້ນັ້ນຂ້ານ້ອຍຈະໄດ້ໜີຈາກມັນໄດ້
13 ແຕ່ແມ່ນທ່ານ ທີ່ເປັນເພື່ອນກັບຂ້ານ້ອຍ
ເປັນຜູ້ຮ່ວມງານຂອງຂ້ານ້ອຍ ເປັນມິດຜູ້ຮູ້ຈັກມັກຄຸ້ນກັບຂ້ານ້ອຍ
14 ເຮົາເຄີຍສົນທະນາປາໄສກັນຢ່າງຊື່ນໃຈ
ເຮົາດຳເນີນໃນພຣະວິຫານຂອງພຣະເຈົ້າແບບເພື່ອນສະນິດ

15 ຂໍມັດຈຸລາດມາຫາພວກເຂົາເຫລົ່ານັ້ນ ໃຫ້ລົງໄປຍັງນາລົກທັງເປັນ
ເພາະຄວາມຊົ່ວຊ້າຢູ່ໃນທີ່ຢູ່ອາໄສຂອງພວກເຂົາ ແລະຢູ່ທ່າມກາງພວກເຂົາ
16 ສຳລັບຂ້ານ້ອຍ ຂ້ານ້ອຍຈະຮ້ອງທູນຕໍ່ພຣະເຈົ້າ
ແລະພຣະຜູ້ເປັນເຈົ້າຈະຊ່ວຍຂ້ານ້ອຍໃຫ້ລອດພົ້ນ

17 ທັງຕອນເຊົ້າ ຕອນຄໍ່າ ແລະຕອນທ່ຽງ
ຂ້ານ້ອຍຈະອະທິຖານ ແລະຮ້ອງທຸກ
ແລະພຣະອົງຈະຮັບຟັງສຽງຂອງຂ້ານ້ອຍ
18 ພຣະອົງໄດ້ຊ່ວຍຈິດວິນຍານຂອງຂ້ານ້ອຍ
ໃຫ້ປອດໄພຈາກສົງຄາມທີ່ຂ້ານ້ອຍຕໍ່ສູ້ຢູ່
ເພາະຄົນເປັນຈຳນວນຫລາຍຢູ່ຝ່າຍຂ້ານ້ອຍ
19 ພຣະເຈົ້າຈະຮັບຟັງ ແລະລົ້ມພວກເຂົາລົງ ຄືພຣະອົງຜູ້ດຳລົງຢູ່ຕັ້ງແຕ່ບູຮານ

*ເຊລາ*

ເພາະພວກເຂົາບໍ່ປ່ຽນ ພວກເຂົາຈຶ່ງບໍ່ຢຳເກງພຣະເຈົ້າ

20 ລາວຍື່ນມືອອກຕໍ່ສູ້ຜູ້ທີ່ຢູ່ຢ່າງສັນຕິກັບລາວ
ລາວຝ່າຝືນຄຳໝັ້ນສັນຍາຂອງລາວ
21 ຄຳເວົ້າຈາກປາກຂອງລາວມື່ນກວ່ານໍ້ານົມຂຸ່ນ
ແຕ່ສົງຄາມຢູ່ພາຍໃນໃຈຂອງລາວ
ຖ້ອຍຄຳຂອງລາວອ່ອນນຸ່ມຫລາຍກວ່ານໍ້າມັນ
ແຕ່ຖ້າວ່າເປັນດາບທີ່ຖອດອອກມາແລ້ວ

22 ຈົ່ງມອບພາລະຂອງທ່ານໄວ້ກັບພຣະຜູ້ເປັນເຈົ້າ
ແລະພຣະອົງຈະຄໍ້າຊູທ່ານ
ພຣະອົງຈະບໍ່ຍອມໃຫ້ຄົນຊອບທຳສັ່ນຄອນເລີຍ

23 ຂ້າແດ່ພຣະເຈົ້າ ແຕ່ພຣະອົງຈະຖິ້ມພວກເຂົາລົງສູ່ປາກແດນຄົນຕາຍ
ຄົນທີ່ເຮັດໃຫ້ຄົນເລືອດຕົກ ແລະຄົນຫລອກລວງຈະມີຊີວິດຢູ່
ບໍ່ເຖິງເຄິ່ງຈຳນວນເວລາຂອງພວກເຂົາ ແຕ່ຂ້ານ້ອຍຈະວາງໃຈໃນພຣະອົງ

# ບົດທີ 56

## ດາວິດຂໍໃຫ້ລອດພົ້ນຈາກພວກສັດຕູ

*ເຖິງຫົວໜ້ານັກຮ້ອງທຳນອງນົກເຂົາເທິງຕົ້ນແປກ ມິກຕາມບົດໜຶ່ງຂອງດາວິດ*
*ເມື່ອຊາວຟີລິດສະຕິນຈັບເພິ່ນໃນເມືອງກັດ*

1 ຂ້າແດ່ພຣະເຈົ້າຂໍເມດຕາຂ້ານ້ອຍ ເພາະມະນຸດຈະກືນຂ້ານ້ອຍ
ພວກເຂົາຕໍ່ສູ້ ແລະບີບບັງຄັບຂ້ານ້ອຍແຕ່ເຊົ້າຈົນຮອດຄໍ່າ
2 ຂ້າແດ່ພຣະອົງຜູ້ສູງສຸດ ພວກສັດຕູຂອງຂ້ານ້ອຍຈະກືນຂ້ານ້ອຍ
ແຕ່ເຊົ້າຈົນຮອດຄໍ່າ ເພາະຫລາຍຄົນຕໍ່ສູ້ຂ້ານ້ອຍ

3 ເມື່ອຂ້ານ້ອຍຢ້ານ ຂ້ານ້ອຍວາງໃຈໃນພຣະອົງ

4 ໃນພຣະເຈົ້າຂ້ານ້ອຍຈະສັນລະເສີນພຣະທຳຂອງພຣະອົງ ໃນພຣະເຈົ້າ
ຂ້ານ້ອຍວາງໃຈຢູ່
ຂ້ານ້ອຍຈະບໍ່ຢ້ານວ່າເນື້ອໜັງຈະເຮັດຫຍັງແກ່ຂ້ານ້ອຍໄດ້

5 ພວກເຂົາທຳຮ້າຍຄຳກ່າວຂອງຂ້ານ້ອຍແຕ່ເຊົ້າຈົນຮອດຄໍ່າ
ຄວາມຄິດທັງໝົດຂອງພວກເຂົາລ້ວນແຕ່ມຸ້ງຮ້າຍຕໍ່ຂ້ານ້ອຍ
6 ພວກເຂົາຮ່ວມຫົວກັນ ຊຸ້ມຢູ່ ພວກເຂົາເຝົ້າຮອຍຕີນຂອງຂ້ານ້ອຍ
ຄືກັບຄົນທີ່ຊຸ້ມຄອຍຖ້າເອົາຊີວິດຂ້ານ້ອຍ
7 ພວກເຂົາຈະໜີໃຫ້ພົ້ນເພາະເຫດຄວາມຊົ່ວຊ້າຂອງຕົນຫລື ຂ້າແດ່ພຣະເຈົ້າ
ຂໍຖິ້ມຊົນຊາດທັງຫລາຍລົງມາດ້ວຍພຣະພິໂລດ

8 ພຣະອົງນັບການຫຽວໄປຫຽວມາຂອງຂ້ານ້ອຍ
ເກັບນໍ້າຕາຂອງຂ້ານ້ອຍໃສ່ກວດແກ້ວຂອງພຣະອົງໄວ້
ນໍ້າຕານັ້ນບໍ່ຢູ່ໃນບັນຊີຂອງພຣະອົງຫລືພຣະເຈົ້າຂ້າ

## ດາວິດວາງໃຈໃນພຣະເຈົ້າ

9 ແລ້ວສັດຕູຂອງຂ້ານ້ອຍຈະຖອຍຫລັງກັບໃນມື້ທີ່ຂ້ານ້ອຍຮ້ອງທູນ
ຂ້ານ້ອຍຮູ້ເຊັ່ນນີ້ວ່າພຣະເຈົ້າສະຖິດຝ່າຍຂ້ານ້ອຍ

10 ໃນພຣະເຈົ້າຂ້ານ້ອຍຈະສັນລະເສີນພຣະທຳຂອງພຣະອົງ
ໃນພຣະຜູ້ເປັນເຈົ້າຂ້ານ້ອຍຈະສັນລະເສີນພຣະທຳຂອງພຣະອົງ
11 ໃນພຣະເຈົ້າຂ້ານ້ອຍວາງໃຈຢູ່
ຂ້ານ້ອຍຈະບໍ່ຢ້ານວ່າມະນຸດອາດກະທຳຫຍັງແກ່ຂ້ານ້ອຍໄດ້
12 ຂ້າແດ່ພຣະເຈົ້າທີ່ຂ້ານ້ອຍປະຕິຍານໄວ້ນັ້ນ ຂ້ານ້ອຍຈະເຮັດຕາມ
ຂ້ານ້ອຍຈະຖວາຍຄຳສັນລະເສີນແດ່ພຣະອົງ
13 ເພາະພຣະອົງຊ່ວຍຈິດວິນຍານຂອງຂ້ານ້ອຍໃຫ້ພົ້ນຈາກມັດຈຸລາດ
ພຣະອົງຈະຊ່ວຍຕີນຂອງຂ້ານ້ອຍໃຫ້ພົ້ນຈາກການລົ້ມບໍ່ແມ່ນຫລື
ເພື່ອຂ້ານ້ອຍຈະດຳເນີນຢູ່ຕໍ່ເບື້ອງພຣະພັກພຣະເຈົ້າ
ໃນຄວາມສະຫວ່າງແຫ່ງຊີວິດ

# ບົດທີ 57

## ການອ້ອນວອນຂໍຄວາມຊ່ອຍເຫລືອ

1 ພຣະເຈົ້າຂ້າ ຂໍຊົງເມດຕາກະລຸນາຂ້ານ້ອຍ
ເພື່ອຄວາມປອດໄພ ຂ້ານ້ອຍເຂົ້າມາເພິ່ງພຣະອົງ
ຂ້ານ້ອຍໄດ້ຮັບການຄຸ້ມຄອງພາຍໃຕ້ຮົ່ມເງົາຂອງພຣະອົງ
ຈົນອັນຕະລາຍທຸກຢ່າງຜ່ານພົ້ນໄປ.

2 ຂ້າແດ່ພຣະເຈົ້າອົງສູງສຸດ ຂ້ານ້ອຍຮ້ອງຫາພຣະອົງ
ຜູ້ຊຶ່ງກະທຳໃຫ້ຄວາມປະສົງຂອງຂ້ານ້ອຍສຳເລັດ.
3 ພຣະອົງຈະຊົງຕອບຈາກສະຫວັນຊັ້ນຟ້າ ແລະຊ່ອຍຂ້ານ້ອຍໃຫ້ພົ້ນໄພ
ພຣະອົງຈະຊົງໃຫ້ສັດຕູຂອງຂ້ານ້ອຍພ່າຍແພ້

*ເຊລາ*

ພຣະເຈົ້າຈະຊົງສະແດງຄວາມຮັກອັນໝັ້ນຄົງ
ແລະຄວາມຈິງໃຈຂອງພຣະອົງໃຫ້ແກ່ຂ້ານ້ອຍ.
4 ຂ້ານ້ອຍລົ້ມລົງທ່າມກາງຝູງສິງ
ທີ່ຕຽມຈະກັດກິນມະນຸດ
ແຂ້ວຂອງມັນຄ້າຍຄືຫອກ ແລະລູກສອນ
ລີ້ນຂອງມັນຄ້າຍຄືຄົມດາບ.
5 ໂອພຣະເຈົ້າຂ້າ ຂໍຊົງສະແດງຄວາມຍິ່ງໃຫຍ່ຂອງພຣະອົງທີ່ທ້ອງຟ້າ
ແລະໃຫ້ລັດສະໝີຂອງພຣະອົງຢູ່ເໜືອແຜ່ນດິນໂລກ.
6 ສັດຕູໄດ້ກາງຕາໜ່າງເພື່ອດັກຈັບຂ້ານ້ອຍ
ຂ້ານ້ອຍຈະຊະນະການນີ້ໄດ້ຍາກ
ພວກເຂົາຂຸດຂຸມໃສ່ທາງຫຍ່າງຂອງຂ້ານ້ອຍ
ແຕ່ແລ້ວແມ່ນພວກເຂົາເອງໄດ້ຕົກຂຸມນັ້ນ.

*ເຊລາ*

7 ໂອພຣະເຈົ້າຂ້າ ຂ້ານ້ອຍຕຽມພ້ອມແລ້ວ
ຂ້ານ້ອຍພ້ອມແລ້ວທຸກຢ່າງ
ຂ້ານ້ອຍຈະຮ້ອງເພງສັນລະເສີນພຣະອົງ.
8 ຈິດວິນຍານຂອງຂ້ານ້ອຍເອີຍ ຈົ່ງລຸກຂຶ້ນ
ຂ້ານ້ອຍຈະດີດພິນໃຫ້ດັງ
ແລະຂ້ານ້ອຍຈະປຸກຕາວັນໃຫ້ລຸກຂຶ້ນ.
9 ຂ້າແດ່ພຣະຜູ້ເປັນເຈົ້າຂ້ານ້ອຍຂອບພຣະຄຸນພຣະອົງ
ທ່າມກາງຊົນຊາດທັງຫລາຍ
ຂ້ານ້ອຍຈະສັນລະເສີນພຣະອົງ.
10 ຄວາມຮັກອັນໝັ້ນຄົງຂອງພຣະອົງສູງເຖິງສະຫວັນຊັ້ນຟ້າ
ແລະຄວາມສັດຊື່ຂອງພຣະອົງກໍສູງເຖິງທ້ອງຟ້າ.
11 ພຣະເຈົ້າຂ້າ ຂໍຊົງສະແດງຄວາມຍິ່ງໃຫຍ່ຂອງພຣະອົງເທິງທ້ອງຟ້າ
ແລະລັດສະໝີຂອງພຣະອົງໃຫ້ຢູ່ເໜືອແຜ່ນດິນໂລກ.

# ບົດທີ 58

## ການຕຳໜິຜູ້ພິພາກສາອະທຳ

*ເຖິງຫົວໜ້ານັກຮ້ອງຕາມທຳນອງຢ່າທຳລາຍ ມິກຕາມບົດໜຶ່ງຂອງດາວິດ*

1 ຊຸມນຸມຊົນເອີຍ ທ່ານເວົ້າຢ່າງຊອບທຳຫລື
ບຸດທັງຫລາຍຂອງມະນຸດເອີຍ ທ່ານພິພາກສາຢ່າງທ່ຽງທຳຫລື
2 ບໍ່ເລີຍ ໃນໃຈຂອງທ່ານ ທ່ານປະດິດຄວາມຜິດ
ທ່ານຊັ່ງຄວາມທາລຸນແຫ່ງມືຂອງທ່ານໃນແຜ່ນດິນໂລກ

## ລັກສະນະຂອງຄົນຊົ່ວ

3 ຄົນຊົ່ວຫລົງເຮັດບາບໄປຕັ້ງແຕ່ຈາກທ້ອງແມ່
ພວກເຂົາຫລົງທາງໄປຕັ້ງແຕ່ເກີດ ຄືເວົ້າຂີ້ຕົວະ
4 ພວກເຂົາມີພິດເໝືອນພິດງູ ເໝືອນງູເຫົ່າຫູໜວກທີ່ອັດຫູຂອງມັນ
5 ມັນຈຶ່ງບໍ່ຟັງສຽງຂອງໝໍງູ ຜູ້ຊຶ່ງມີມົນຂັງ

6 ຂ້າແດ່ພຣະເຈົ້າຂໍຫັກແຂ້ວໃນປາກຂອງມັນ ຂ້າແດ່ພຣະຜູ້ເປັນເຈົ້າ
ຂໍຈີກແຂ້ວຂອງສິງໃຫຍ່ໜຸ່ມອອກ
7 ໃຫ້ພວກເຂົາຫາຍໄປເໝືອນນໍ້າທີ່ໄຫລບໍ່ຂາດສາຍ
ເມື່ອພວກເຂົາຫ້າງທະນູເພື່ອຍິງລູກທະນູ ໃຫ້ລູກທະນູນັ້ນຖືກຕັດເປັນທ່ອນໆ
8 ຂໍໃຫ້ພວກເຂົາເໝືອນທາກທີ່ລະລາຍເປັນເມືອກໄປ
ເໝືອນເດັກນ້ອຍທີ່ເກີດໃໝ່ແລ້ວຕາຍໄປ ບໍ່ເຄີຍເຫັນດວງຕາເວັນ

9 ໄວຍິ່ງກວ່າໝໍ້ຈະຮູ້ສຶກຮ້ອນດ້ວຍໄຟ
ທັງເປັນ ແລະດ້ວຍພຣະພິໂລດຂອງພຣະອົງ
ພຣະອົງຈະກວາດພວກເຂົາໄປເໝືອນລົມພາຍຸ
10 ຄົນຊອບທຳຈະຊົມຊື່ນຍິນດີ ເມື່ອພວກເຂົາເຫັນການແກ້ແຄ້ນ
ພວກເຂົາຈະເອົາເລືອດຂອງຄົນຊົ່ວມາລ້າງຕີນຂອງຕົນ
11 ຈະມີຄົນກ່າວວ່າ "ແນ່ແລ້ວ ມີບຳເໜັດໃຫ້ແກ່ຄົນຊອບທຳ ແນ່ແລ້ວ
ມີພຣະເຈົ້າຜູ້ພິພາກສາໂລກ"

# ບົດທີ 59

## ດາວິດທູນຂໍການຊ່ວຍໃຫ້ພົ້ນໄພ

*ເຖິງຫົວໜ້ານັກຮ້ອງຕາມທຳນອງຢ່າທຳລາຍ ມິກຕາມບົດໜຶ່ງຂອງດາວິດ*
*ເມື່ອຊາອູນໃຊ້ຄົນໃຫ້ໄປເຝົ້າເຮືອນຂອງດາວິດ ເພື່ອຈະຂ້າເພິ່ນ*

1 ຂ້າແດ່ພຣະເຈົ້າຂອງຂ້ານ້ອຍ
ຂໍຊ່ວຍຂ້ານ້ອຍໃຫ້ພົ້ນຈາກສັດຕູຂອງຂ້ານ້ອຍ

ຂໍຊ່ວຍປ້ອງກັນຂ້ານ້ອຍໃຫ້ພົ້ນຈາກບັນດາຜູ້ທີ່ລຸກຂຶ້ນຕໍ່ສູ້ຂ້ານ້ອຍ
2 ຂໍຊ່ວຍຂ້ານ້ອຍໃຫ້ພົ້ນຈາກຜູ້ທີ່ເຮັດຄວາມຊົ່ວຮ້າຍ
ແລະຂໍຊ່ວຍຂ້ານ້ອຍໃຫ້ລອດພົ້ນຈາກຄົນກະຫາຍເລືອດ
3 ເພາະເບິ່ງແມ ພວກເຂົາປອງຮ້າຍ ຖ້າເອົາຊີວິດຂ້ານ້ອຍ
ຜູ້ມີອຳນາດຮ່ວມຫົວກັນຕໍ່ສູ້ຂ້ານ້ອຍ ຂ້າແດ່ພຣະຜູ້ເປັນເຈົ້າ
ບໍ່ແມ່ນການລະເມີດ ຫລືບາບຂອງຂ້ານ້ອຍເອງ
4 ພວກເຂົາແລ່ນໄປຕຽມພ້ອມ ບໍ່ແມ່ນຄວາມຜິດຂອງຂ້ານ້ອຍ ຂໍຕື່ນຂຶ້ນ
ຂໍມາຊ່ວຍຂ້ານ້ອຍ ແລະທອດພຣະເນດ
5 ຂ້າແດ່ພຣະຜູ້ເປັນເຈົ້າພຣະເຈົ້າຈອມໂຍທາ
ພຣະອົງເປັນພຣະເຈົ້າຂອງອິສຣາເອນ
ຂໍຕື່ນຂຶ້ນລົງໂທດບັນດາປະຊາຊາດ
ຂໍຢ່າເມດຕາຜູ້ລະເມີດທີ່ຄິດຮ້າຍແມ່ນແຕ່ຄົນດຽວ

*ເຊລາ*

6 ພວກເຂົາກັບມາທຸກຕອນແລງເໝືອນຢ່າງໝາ ແລະທຽວໄປທົ່ວນະຄອນ
7 ເບິ່ງແມ ປາກຂອງພວກເຂົາຍັງກ່າວຄຳໝິ່ນປະໝາດຢູ່
ແລະມີດາບທີ່ຮີມປາກຂອງພວກເຂົາ ເພາະພວກເຂົາຄິດວ່າ “ໃຜຈະຟັງເຮົາ”
8 ຂ້າແດ່ພຣະຜູ້ເປັນເຈົ້າ ແຕ່ພຣະອົງຫົວເຍາະເຍີ້ຍພວກເຂົາ
ພຣະອົງເຍາະເຍີ້ຍປະຊາຊາດທັງປວງ
9 ເພາະເຫດພຣະກຳລັງຂອງພຣະອົງ ຂ້ານ້ອຍຈະຖ້າເຝົ້າພຣະອົງ
ເພາະພຣະເຈົ້າເປັນປ້ອມປ້ອງກັນຂອງຂ້ານ້ອຍ
10 ພຣະເຈົ້າແຫ່ງຄວາມເມດຕາຂອງຂ້ານ້ອຍຈະປ້ອງກັນຂ້ານ້ອຍ
ພຣະເຈົ້າຈະໃຫ້ຂ້ານ້ອຍເຫັນຄວາມປາດຖະໜາຂອງຂ້ານ້ອຍ
ຕໍ່ພວກສັດຕູຂອງຂ້ານ້ອຍນັ້ນສຳເລັດ

11 ຂ້າແດ່ອົງພຣະຜູ້ເປັນເຈົ້າໂລ່ຂອງຂ້ານ້ອຍທັງຫລາຍ
ຂໍຢ່າສັງຫານພວກເຂົາ ຢ້ານວ່າຊົນຊາດຂອງຂ້ານ້ອຍຈະລືມ
ຂໍໃຫ້ພວກເຂົາລົບຫລີກໄປດ້ວຍລິດທານຸພາບຂອງພຣະອົງ
ແລະເຮັດໃຫ້ພວກເຂົາລົ້ມລົງ
12 ເພາະບາບຢູ່ໃນປາກຂອງພວກເຂົາ ແລະເພາະຖ້ອຍຄຳທີ່ມາຈາກປາກຂອງພວກເຂົາ
ຂໍໃຫ້ພວກເຂົາຕິດກັບໂດຍຄວາມຈອງຫອງຂອງພວກເຂົາ
ເພາະການສາບແຊ່ງ ແລະການຂີ້ຕົວະ ຊຶ່ງພວກເຂົາເປ່ງອອກມານັ້ນ
13 ຂໍເຜົາຜານພວກເຂົາໂດຍພຣະພິໂລດ ຂໍເຜົາຜານພວກເຂົາຈົນບໍ່ເຫລືອເລີຍ
ແລ້ວພວກເຂົາຈະຮູ້ວ່າພຣະເຈົ້າປົກຄອງເໜືອຢາໂຄບ
ເຖິງທີ່ສຸດປາຍແຜ່ນດິນໂລກ

*ເຊລາ*

14 ໃຫ້ພວກເຂົາກັບມາທຸກຕອນແລງເໝືອນຢ່າງໂຕໝາ ແລະຫຍູວໄປທົ່ວນະຄອນ
15 ໃຫ້ພວກເຂົາທ່ຽວໄປຫາອາຫານ ຖ້າບໍ່ໄດ້ກິນອີ່ມກໍເຫົ່າກໍຫອນ

16 ແຕ່ຂ້ານ້ອຍຈະຮ້ອງເພງເຖິງລິດທານຸພາບຂອງພຣະອົງ
ຂ້ານ້ອຍຈະຮ້ອງເພງເຖິງຄວາມເມດຕາຂອງພຣະອົງໃນຕອນເຊົ້າ
ເພາະພຣະອົງເປັນປ້ອມປ້ອງກັນຂອງຂ້ານ້ອຍ
ເປັນທີ່ລີ້ໄພໃນຍາມທຸກຍາກຂອງຂ້ານ້ອຍ
17 ຂ້າແດ່ພຣະກຳລັງຂອງຂ້ານ້ອຍ ຂ້ານ້ອຍຈະຮ້ອງເພງສັນລະເສີນພຣະອົງ
ເພາະ ພຣະເຈົ້າ ເປັນປ້ອມປ້ອງກັນຂອງຂ້ານ້ອຍ
ແລະເປັນ ພຣະເຈົ້າ ແຫ່ງຄວາມເມດຕາຂອງຂ້ານ້ອຍ

# ບົດທີ 60

## ດາວິດທູນຂໍການຊ່ວຍໃຫ້ພົ້ນໄພ

*ເຖິງຫົວໜ້ານັກຮ້ອງ ທຳນອງດອກບົວ ມິກຕາມບົດໜຶ່ງຂອງດາວິດເພື່ອສັ່ງສອນ*
*ເມື່ອທ່ານບັນດານກ່ຽວກັບອາຣາມ-ນາຮາຣາຢິມ ແລະອາຣາມ-ໂຊບາ.*
*ແລະເມື່ອຂາກັບ ໂຢອາບໄດ້ຂ້າຊາວເອໂດມໜຶ່ງໝື່ນສອງພັນຄົນໃນຮ່ອມພູເກືອ*

1 ຂ້າແດ່ພຣະເຈົ້າພຣະອົງໄດ້ປະຖິ້ມຂ້ານ້ອຍທັງຫລາຍແລ້ວ
ທັງໄດ້ເຮັດໃຫ້ຂ້ານ້ອຍທັງຫລາຍກະຈັດກະຈາຍໄປ
ພຣະອົງບໍ່ພໍພຣະໄທ ຂໍໃຫ້ພຣະອົງຫັນມາຫາຂ້ານ້ອຍທັງຫລາຍອີກ
2 ພຣະອົງເຮັດໃຫ້ແຜ່ນດິນຫວັ່ນໄຫວ ໃຫ້ມັນແຕກແຍກອອກ
ຂໍແປງປ່ອງຂອງມັນເພາະມັນຫວັ່ນໄຫວ
3 ພຣະອົງເຮັດໃຫ້ປະຊາຊົນຂອງພຣະອົງປະສົບຄວາມລຳບາກ
ພຣະອົງບັງຄັບຂ້ານ້ອຍໃຫ້ດື່ມນໍ້າອະງຸ່ນແຫ່ງຄວາມປະຫລາດໃຈ
4 ພຣະອົງຕັ້ງທຸງໄວ້ໃຫ້ບັນດາຜູ້ທີ່ຢຳເກງພຣະອົງ ເພື່ອເພາະເຫດຄວາມຈິງ

*ເຊລາ*

5 ຂໍຊ່ວຍໃຫ້ລອດພົ້ນໂດຍພຣະຫັດຂວາຂອງພຣະອົງ ແລະຟັງຂ້ານ້ອຍ
ເພື່ອວ່າຜູ້ທີ່ພຣະອົງຮັກຈະໄດ້ຮັບການຊ່ວຍໃຫ້ພົ້ນ

6 ພຣະເຈົ້າໄດ້ກ່າວດ້ວຍຄວາມບໍລິສຸດຂອງພຣະອົງ ວ່າ “ເຮົາຈະປິຕິຍິນດີ
ເຮົາຈະແບ່ງເມືອງຊີເຄັມ ແລະແບ່ງຮ່ອມພູເມືອງສຸກໂກດອອກ
7 ກິເລອາດ ເປັນຂອງເຮົາມານາເຊ ເປັນຂອງເຮົາ
ເອຟຣາຢິມ ເປັນເຄື່ອງປ້ອງກັນຫົວຂອງເຮົາ
ຢູດາ ເປັນຜູ້ປະກາດພຣະບັນຍັດຂອງເຮົາ
8 ໂມອາບ ເປັນອ່າງລ້າງຊຳລະຂອງເຮົາ

ເຮົາຖິ້ມເກີບຂອງເຮົາລົງເທິງ ເອໂດມ
ເຮົາໂຫ່ຮ້ອງດ້ວຍຄວາມມີໄຊເໜືອ ຟີລິດສະຕິນ"

9 ຜູ້ໃດຈະນຳຂ້ານ້ອຍເຂົ້າໄປໃນນະຄອນທີ່ມີປ້ອມ
ຜູ້ໃດຈະນຳຂ້ານ້ອຍໄປຍັງ ເອໂດມ
10 ຂ້າແດ່ພຣະເຈົ້າ ພຣະອົງບໍ່ໄດ້ປະຖິ້ມຂ້ານ້ອຍທັງຫລາຍແລ້ວຫລື
ຂ້າແດ່ພຣະເຈົ້າ
ພຣະອົງບໍ່ອອກໄປກັບກອງທັບຂອງຂ້ານ້ອຍທັງຫລາຍແລ້ວບໍ
11 ຂໍປະທານຄວາມຊ່ວຍເຫລືອເພື່ອຕໍ່ຕ້ານຄວາມຫຍຸ້ງຍາກຕ່າງໆ
ເພາະຄວາມຊ່ວຍເຫລືອຂອງມະນຸດກໍບໍ່ມີຜົນ
12 ໂດຍ ພຣະເຈົ້າ ເອງ ຂ້ານ້ອຍທັງຫລາຍຈະປະຕິບັດຢ່າງເຂັ້ມແຂງ
ພຣະອົງເອງຈະເປັນຜູ້ຢຽບຄູ່ແຂ່ງຂອງຂ້ານ້ອຍທັງຫລາຍລົງ

# ບົດທີ 61

## ດາວິດຮ້ອງທູນຕໍ່ພຣະເຈົ້າ

*ເຖິງຫົວໜ້ານັກຮ້ອງໃຊ້ເຄື່ອງສາຍ ເພງສັນລະເສີນຂອງດາວິດ*

1 ຂ້າແດ່ພຣະເຈົ້າ ຂໍຟັງສຽງຮ້ອງຂອງຂ້ານ້ອຍ
ຂໍຮັບຟັງຄຳອະທິຖານຂອງຂ້ານ້ອຍ
2 ຂ້ານ້ອຍຮ້ອງທູນພຣະອົງມາແຕ່ທີ່ສຸດປາຍແຜ່ນດິນໂລກ
ເມື່ອຈິດໃຈຂອງຂ້ານ້ອຍເບື່ອໜ່າຍໄປ
ຂໍນຳຂ້ານ້ອຍມາເຖິງສີລາທີ່ສູງກວ່າຂ້ານ້ອຍ
3 ເພາະພຣະອົງເປັນທີ່ລີ້ໄພຂອງຂ້ານ້ອຍ
ເປັນຫໍຄອຍອັນເຂັ້ມແຂງທີ່ປະເຊີນໜ້າກັບສັດຕູ
4 ຂ້ານ້ອຍຈະຢູ່ໃນຫໍເຕັນຂອງພຣະອົງເປັນນິດ
ຂ້ານ້ອຍຈະວາງໃຈໃນທີ່ກຳບັງປີກຂອງພຣະອົງ

*ເຊລາ*

5 ຂ້າແດ່ພຣະເຈົ້າ ເພາະພຣະອົງຮັບຟັງຄຳປະຕິຍານຂອງຂ້ານ້ອຍ
ແລະພຣະອົງປະທານມໍລະດົກຂອງບັນດາຜູ້
ທີ່ຢຳເກງພຣະນາມຂອງພຣະອົງແກ່ຂ້ານ້ອຍ
6 ພຣະອົງຈະຍືດພະຊົນຂອງກະສັດ
ໃຫ້ປີເດືອນຂອງເພິ່ນຍືນຍາວໄປຫລາຍຊົ່ວອາຍຸ
7 ເພິ່ນຈະຄອຍຖ້າເຝົ້າຕໍ່ພຣະພັກ ພຣະເຈົ້າ ເປັນນິດ ຂໍແຕ່ງຕັ້ງຄວາມເມດຕາ
ແລະຄວາມຈິງໄວ້ຄຸ້ມຄອງເພິ່ນ
8 ແລ້ວຂ້ານ້ອຍຈະຮ້ອງເພງສັນລະເສີນພຣະນາມຂອງພຣະອົງສະເໝີ

ຕາມທີ່ຂ້ານ້ອຍເຮັດຕາມຄຳປະຕິຍານຢູ່ແຕ່ລະມື້ນັ້ນ

# ບົດທີ 62

## ຄວາມໄວ້ວາງໃຈໃນການຄຸ້ມຄອງຂອງພຣະອົງ

1 ຂ້ານ້ອຍຂໍມອບຕົວໄວ້ກັບພຣະເຈົ້າພຽງອົງດຽວ
  ພຣະເຈົ້າຊົງຊ່ອຍຂ້ານ້ອຍໃຫ້ພົ້ນ.
2 ພຣະອົງຊົງເປັນທີ່ເພິ່ງ ແລະພຣະຜູ້ຊ່ອຍໃຫ້ພົ້ນຂອງຂ້ານ້ອຍພຽງອົງດຽວ
  ພຣະອົງຊົງເປັນຜູ້ປົກປ້ອງຂ້ານ້ອຍ
ແລະຂ້ານ້ອຍຈະບໍ່ພ່າຍແພ້ ແຕ່ຈະຕັ້ງໝັ້ນຄົງຢູ່.
3 ເທິງປານໃດເຈົ້າຈະເຊົາຕີຂ້ອຍ ຜູ້ຊຶ່ງກຳລັງຈະລົ້ມຕາຍ
  ເໝືອນກຳແພງ ແລະຮົ້ວທີ່ກຳລັງຈະພັງລົງ.
4 ພວກເຈົ້າມີແຕ່ຢາກດຶງຂ້ອຍລົງຈາກຕຳແໜ່ງອັນມີກຽດ
  ພວກເຈົ້າມັກເວົ້າຕົວະ
ພວກເຈົ້າກ່າວຄຳອວຍພອນ
  ແຕ່ພາຍໃນຫົວໃຈພວກເຈົ້າກໍປ້ອຍດ່າຂ້ອຍ.

*ເຊລາ*

5 ຂ້ານ້ອຍຂໍມອບຕົວໄວ້ກັບພຣະເຈົ້າພຽງອົງດຽວ
  ຂ້ານ້ອຍຝາກຄວາມຫວັງໄວ້ກັບພຣະອົງ.
6 ພຣະອົງຊົງເປັນທີ່ເພິ່ງ ແລະເປັນພຣະຜູ້ຊ່ອຍໃຫ້ພົ້ນ
  ຂອງຂ້ານ້ອຍພຽງອົງດຽວ
ພຣະອົງຊົງເປັນຜູ້ປົກປ້ອງຂ້ານ້ອຍ
  ແລະຂ້ານ້ອຍຈະບໍ່ພ່າຍແພ້ ແຕ່ຈະຕັ້ງໝັ້ນຄົງຢູ່.
7 ຄວາມພົ້ນ ແລະກຽດຕິຍົດຂອງຂ້ານ້ອຍຢູ່ກັບພຣະອົງ
  ພຣະອົງຊົງເປັນຄືໂງ່ນຫີນປ້ອງກັນຂ້ານ້ອຍ
ພຣະອົງຊົງເປັນບ່ອນພັກອາໄສຂອງຂ້ານ້ອຍ.
8 ປະຊາຊົນທັງຫລາຍຂອງຂ້ານ້ອຍເອີຍ ຈົ່ງເຊື່ອຟັງພຣະເຈົ້າຕະຫລອດໄປ
  ຈົ່ງກາບທູນຄວາມທຸກຍາກລຳບາກຂອງພວກເຈົ້າຕໍ່ພຣະອົງ
ເພາະພຣະອົງຊົງເປັນທີ່ເພິ່ງຂອງພວກເຮົາ.

*ເຊລາ*

9 ມະນຸດປຽບເໝືອນລົມຫາຍໃຈ
  ຄົນທີ່ຕາຍເປັນນັ້ນບໍ່ມີຄຸນຄ່າຫຍັງເລີຍ
ເມື່ອເອົາມາຊັ່ງຊາເບິ່ງກໍບໍ່ມີນ້ຳໜັກຫຍັງໝົດ
  ພວກເຂົາເບົາກວ່າລົມຫາຍໃຈ.

10 ຢ່າຄິດວ່າຈະໄດ້ມາດ້ວຍຄວາມຮຸນແຮງ
ຢ່າຫວັງຢາກໄດ້ສິ່ງໜຶ່ງສິ່ງໃດເລີຍຈາກການລັກໂລບ
ຖ້າຫາກວ່າພວກເຈົ້າຮັ່ງມີຂຶ້ນ
ກໍຢ່າມົວເມົາກັບສິ່ງເຫລົ່ານັ້ນ.

11 ຂ້ານ້ອຍໄດ້ຍິນພຣະເຈົ້າຊົງກ່າວຫລາຍເທື່ອແລ້ວວ່າ
ລິດອຳນາດເປັນຂອງພຣະອົງ.
12 ແລະຄວາມຮັກຂອງພຣະອົງກໍໝັ້ນຄົງ
ຂ້າແດ່ພຣະຜູ້ເປັນເຈົ້າພຣະອົງເອງຊົງເປັນຜູ້ທີ່ຕອບສະໜອງ
ຕາມຜົນການກະທຳຂອງທຸກໆຄົນ.

# ບົດທີ 63

## ຄວາມປາດຖະໜາໃນພຣະເຈົ້າ

1 ພຣະເຈົ້າຂ້າ ພຣະອົງເປັນພຣະເຈົ້າຂອງຂ້ານ້ອຍ
ຂ້ານ້ອຍຊອກສະແຫວງຫາພຣະອົງ
ຂ້ານ້ອຍຕ້ອງປະສົງພຣະອົງດ້ວຍສຸດຈິດສຸດໃຈ
ຈິດໃຈຂອງຂ້ານ້ອຍຫິວກະຫາຍພຣະອົງ
ເໝືອນດັ່ງດິນແຫ້ງແລ້ງທີ່ຂາດນໍ້າ.
2 ຂໍໃຫ້ຂ້ານ້ອຍພົບພຣະອົງ ໃນພຣະວິຫານຂອງພຣະອົງ
ເພື່ອໃຫ້ຂ້ານ້ອຍເຫັນຄວາມຍິ່ງໃຫຍ່ ແລະລັດສະໝີທີ່ພຣະອົງຊົງມີຢູ່.

3 ຄວາມຮັກອັນໝັ້ນຄົງຂອງພຣະອົງກໍດີກວ່າຊີວິດ
ດ້ວຍເຫດນີ້ ຂ້ານ້ອຍຈະສັນລະເສີນພຣະອົງ.
4 ຂ້ານ້ອຍຈະໂມທະນາຂອບພຣະຄຸນພຣະອົງຕະຫລອດຊີວິດ
ຂ້ານ້ອຍຈະຍໍມືອ້ອນວອນຫາພຣະອົງ.
5 ຈິດໃຈຂອງຂ້ານ້ອຍຈະອີ່ມໜຳສຳລານ
ແລະຂ້ານ້ອຍຈະຮ້ອງເພງຍິນດີສັນລະເສີນພຣະອົງ.

6 ເວລາຂ້ານ້ອຍນອນ ຂ້ານ້ອຍລະນຶກເຖິງພຣະອົງ
ແລະຄິດເຖິງພຣະອົງຕະຫລອດທັງຄືນ.
7 ເພາະພຣະອົງຊົງເປັນຜູ້ຊົດຊ່ອຍຂ້ານ້ອຍຢູ່ເລື້ອຍໆ
ຂ້ານ້ອຍຮ້ອງເພງຍິນດີໃນຮົ່ມເງົາຂອງພຣະອົງ.
8 ຂ້ານ້ອຍຕິດພັນກັບພຣະອົງ
ແລະພຣະຫັດຂອງພຣະອົງຊົງອູ້ມຊູຂ້ານ້ອຍໃຫ້ປອດໄພ.

9 ສ່ວນຜູ້ທີ່ພະຍາຍາມສັງຫານຂ້ານ້ອຍ

ກໍຈະໄປສູ່ແດນຄົນຕາຍ.
10 ພວກເຂົາຈະຖືກຂ້າໃນສະໜາມຮົບ
ແລະສົບຂອງພວກເຂົາຈະຖືກໝາປ່າກັດກິນ.
11 ເຈົ້າຊີວິດທັງຫລາຍຈະຊົມຊື່ນຍິນດີໃນ ພຣະເຈົ້າ
ຄົນທັງປວງທີ່ສາບານໃນພຣະນາມຂອງພຣະອົງຈະມີຄວາມສຸກພາກພູມໃຈ
ແຕ່ວ່າປາກຂອງຄົນຂີ້ຕົວະຈະຖືກງັບໄວ້.

# ບົດທີ 64

## ຄຳອະທິຖານຂໍການຊົງປົກປັກຮັກສາໃຫ້ພົ້ນຈາກສັດຕູ

1 ຂ້າແດ່ ພຣະເຈົ້າ ຂໍຊົງຟັງສຽງຂອງຂ້ານ້ອຍ ເມື່ອຂ້ານ້ອຍຮ້ອງທຸກ
ຂໍຊົງຮັກສາຊີວິດຂອງຂ້ານ້ອຍໄວ້ຈາກຄວາມຄິດຢ້ານກົວສັດຕູ
2 ຂໍຊົງເຊື່ອງຂ້ານ້ອຍໄວ້ຈາກການປຶກສາຫາລືກັນຢ່າງລັບໆ
ຂອງຄົນໂຫດຮ້າຍ ຈາກການປອງຮ້າຍຂອງຄົນເຮັດຊົ່ວຊ້າ
3 ຜູ້ທີ່ຝົນລີ້ນຂອງພວກເຂົາເໝືອນກັບຝົນດາບ
ຜູ້ທີ່ເອົາຄວາມຂົມຂື່ນເລັງໃສ່ເໝືອນລູກທະນູ
4 ຍິງອອກມາຈາກພຸ່ມໄມ້ໃສ່ຄົນບໍ່ມີຄວາມຜິດ
ແລະຍິງພວກເຂົາຢ່າງວ່ອງໄວໂດຍບໍ່ສະທ້ານຢ້ານກົວ
5 ພວກເຂົາພາກັນຍຶດຖືເອົາຄວາມປະສົງອັນຊົ່ວຂອງພວກເຂົາຢ່າງໝັ້ນຄົງ
ພວກເຂົາເວົ້າເຖິງການວາງກັບດັກຢ່າງລັບໆ
ຄິດວ່າ "ບໍ່ມີໃຜດອກຈະເຫັນພວກເຂົາໄດ້.
6 ພວກເຂົາທັງຫລາຍຊອກຄົ້ນຫາຄວາມຜິດບາບ
ພວກເຂົາຄິດແຜນການປອງຮ້າຍຂຶ້ນຢ່າງສະຫລາດ"
ເພາະຄວາມຄິດພາຍໃນ ແລະຈິດໃຈຂອງມະນຸດນັ້ນເລິກລ້ຳ

7 ແຕ່ ພຣະເຈົ້າ ຈະຊົງຍິງທະນູໃສ່ພວກເຂົາ ພວກເຂົາຈະບາດເຈັບທັນທີ
8 ເພາະວ່າພວກເຂົາເຮັດໃຫ້ລີ້ນຂອງຕົນເປັນສິ່ງສະດຸດແກ່ຕົນເອງ
ແລະທຸກຄົນທີ່ເຫັນພວກເຂົາກໍຈະແກວ່ງຫົວໃສ່
9 ແລ້ວທຸກຄົນກໍຈະຢຳເກງ ເຂົາຈະບອກເຖິງກິດຈະການຂອງ ພຣະເຈົ້າ
ແລະຕຶກຕອງເຖິງສິ່ງນັ້ນທີ່ພຣະອົງໄດ້ຊົງກະທຳແລ້ວ

10 ໃຫ້ຄົນຊອບທຳຊື່ນຊົມຍິນດີໃນ ພຣະເຈົ້າ ແລະລີ້ໄພຢູ່ໃນພຣະອົງ
ໃຫ້ຄົນທີ່ທ່ຽງທຳໃນຈິດໃຈອວດອ້າງພຣະອົງ

# ບົດທີ 65

## ການສັນລະເສີນ ແລະການຖວາຍຂອບພຣະຄຸນ

1 ໂອພຣະເຈົ້າຂ້າ ປະຊາຊົນຕ້ອງສັນລະເສີນພຣະອົງທີ່ເມືອງຊີໂອນ
ແລະຖວາຍສິ່ງທີ່ເຂົາເຈົ້າສັນຍາໄວ້ກັບພຣະອົງ.
2 ກໍຍ້ອນພຣະອົງຊົງຕອບຄຳອ້ອນວອນທັງຫລາຍຂອງເຂົາເຈົ້າ
ທຸກໆຄົນຈະຕ້ອງມາຫາພຣະອົງ.
3 ເພາະເຫດຄວາມບາບຂອງເຂົາເຈົ້າ
ຍ້ອນຄວາມຜິດຂອງພວກຂ້ານ້ອຍ ພວກຂ້ານ້ອຍຈຶ່ງພ່າຍແພ້
ແຕ່ພຣະອົງຊົງໃຫ້ອະໄພບາບນັ້ນ.
4 ຄວາມສຸກເປັນຂອງຜູ້ທີ່ພຣະອົງຊົງເລືອກໄວ້
ຄືຜູ້ທີ່ພຣະອົງຊົງນຳເຂົາເຈົ້າເຂົ້າມາໃນສະຖານທີ່ສັກສິດ
ພວກຂ້ານ້ອຍຈະອີ່ມບໍລິບູນດ້ວຍພຣະພອນ ແລະຂອງດີ
ທີ່ພຣະວິຫານສັກສິດຂອງພຣະອົງ.

5 ຂ້າແດ່ພຣະຜູ້ເປັນເຈົ້າ ແຫ່ງຄວາມພົ້ນຂອງພວກຂ້ານ້ອຍ
ພຣະອົງຊົງຕອບພວກຂ້ານ້ອຍ
ແລະຊົງຊ່ອຍພວກຂ້ານ້ອຍໃຫ້ພົ້ນໄພດ້ວຍການອັດສະຈັນ
ປະຊາຊົນທຸກຄົນຢູ່ໃນໂລກນີ້
ແລະຢູ່ຟາກນໍ້າທະເລທີ່ໄກອອກໄປ ກໍເຊື່ອໄວ້ວາງໃຈໃນພຣະອົງ.
6 ພຣະອົງຊົງຕັ້ງພູທັງຫລາຍໄວ້ເປັນບ່ອນ
ດ້ວຍອຳນາດອັນຍິ່ງໃຫຍ່ຂອງພຣະອົງ.
7 ພຣະອົງຊົງເຮັດໃຫ້ສຽງສະໜັ່ນຫວັ່ນໄຫວຂອງຄື້ນນໍ້າງຽບລົງ
ແລະຊົງເຮັດໃຫ້ສຽງອຶກກະທຶກຂອງປະຊາຊົນມິດງຽບ.
8 ຍ້ອນການຍິ່ງໃຫຍ່ທີ່ພຣະອົງໄດ້ຊົງກະທຳ
ທົ່ວທັງໂລກນີ້ຈຶ່ງຢຳເກງ
ກິດຈະການຂອງພຣະອົງນຳເອົາສຽງໂຫ່ຮ້ອງຍິນດີ
ແຕ່ແຜ່ນດິນໂລກເບື້ອງຕາເວັນອອກຈົນເຖິງເບື້ອງຕາເວັນຕົກ.

9 ພຣະອົງຊົງສົ່ງນໍ້າຝົນລົງມາບຳລຸງຮັກສາພື້ນແຜ່ນດິນ
ພຣະອົງຊົງເຮັດໃຫ້ພື້ນແຜ່ນດິນນີ້ຮັ່ງມີ ແລະອຸດົມສົມບູນ
ນໍ້າຫ້ວຍທີ່ພຣະອົງຊົງປະທານໃຫ້ນັ້ນກໍບໍ່ເຫືອດແຫ້ງຈັກເທື່ອ
ມັນໄດ້ເຮັດໃຫ້ພື້ນແຜ່ນດິນເກີດພືດຜົນ
ນີ້ແມ່ນການກະທຳຂອງພຣະອົງ.
10 ພຣະອົງຊົງເຮັດໃຫ້ຝົນຕົກທົດທົ່ງນາທີ່ໄຖແລ້ວຢ່າງພຽງພໍ

ພຣະອົງຊົງເຮັດໃຫ້ດິນອ່ອນດ້ວຍຫ່າຝົນ
ແລະຊົງໃຫ້ຕົ້ນກ້າເກີດຂຶ້ນມາ.
11 ຄວາມດີຂອງພຣະອົງຊົງປະທານການເກັບກ່ຽວອັນອຸດົມສົມບູນ
ພຣະອົງຊົງສະເດັດໄປບ່ອນໃດ ບ່ອນນັ້ນກໍອຸດົມສົມບູນ.
12 ຕາມທົ່ງຫຍ້າກໍເຕັມໄປດ້ວຍພືດຜົນ
ຕາມອ້ອມແອ້ມພູກໍເຕັມໄປດ້ວຍຄວາມມ່ວນຊື່ນ.
13 ຝູງແກະກໍຢູ່ທົ່ວທົ່ງຫຍ້າ
ຕາມຮ່ອມພູເຕັມແຕ່ເຂົ້າບາເລ
ພວກເຂົາໂຮຮ້ອງ ແລະຮ້ອງລຳທຳເພງຢ່າງມ່ວນຊື່ນ.

# ບົດທີ 66

## ດາວິດບອກເຖິງຄວາມປະເສີດອັນພິເສດຂອງພຣະເຈົ້າ

*ເຖິງຫົວໜ້ານັກຮ້ອງ ເພງສັນລະເສີນ ຫລືບົດເພງ*

1 ແຜ່ນດິນໂລກທັງໝົດເອີຍ ຈົ່ງເຮັດສຽງຊື່ນບານຖວາຍພຣະເຈົ້າ
2 ຈົ່ງຮ້ອງເພງຖວາຍພຣະກຽດແດ່ພຣະນາມຂອງພຣະອົງ
ຈົ່ງຖວາຍສັນລະເສີນຍ້ອງຍໍຢ່າງຊົມຊື່ນຍິນດີຕໍ່ພຣະອົງ
3 ຈົ່ງທູນພຣະເຈົ້າວ່າ “ພຣະລາຊະກິດຂອງພຣະອົງໜ້າຢ້ານຫລາຍ
ລິດທານຸພາບຂອງພຣະອົງໃຫຍ່ຫລວງ
ຈົນສັດຕູກົ້ມກາບຕໍ່ເບື້ອງພຣະພັກພຣະອົງ
4 ແຜ່ນດິນໂລກທັງໝົດຈະນະມັດສະການພຣະອົງ
ແລະຈະຮ້ອງເພງສັນລະເສີນພຣະອົງ
ພວກເຂົາທັງຫລາຍຈະຮ້ອງເພງສັນລະເສີນພຣະນາມຂອງພຣະອົງ”

*ເຊລາ*

5 ຈົ່ງມາເບິ່ງສິ່ງທີ່ພຣະເຈົ້າໄດ້ກະທຳ
ພະລາຊະກິດຂອງພຣະອົງໜ້າຢ້ານກົວຕໍ່ບຸດທັງຫລາຍຂອງມະນຸດ
6 ພຣະອົງປ່ຽນທະເລໃຫ້ເປັນດິນແຫ້ງ ຄົນຍ່າງຂ້າມແມ່ນໍ້າໄປ
ບ່ອນນັ້ນເຮົາໄດ້ຊົມຊື່ນຍິນດີໃນພຣະອົງ
7 ຜູ້ປົກຄອງດ້ວຍອານຸພາບຂອງພຣະອົງເປັນນິດ
ຜູ້ຊຶ່ງພຣະເນດເຝົ້າບັນດາປະຊາຊາດຢູ່
ຢ່າໃຫ້ຄົນມັກກະບົດຍົກຍ້ອງຕົນເອງ

*ເຊລາ*

8 ຊົນຊາດທັງຫລາຍເອີຍ ຈົ່ງສັນລະເສີນພຣະເຈົ້າຂອງເຮົາ
ຈົ່ງໃຫ້ໄດ້ຍິນສຽງສັນລະເສີນພຣະອົງ

9 ຜູ້ໃຫ້ຈິດວິນຍານເຮົາຢູ່ທ່າມກາງຄົນເປັນ ແລະບໍ່ໄດ້ຍອມໃຫ້ຕີນເຮົາພາດ

10 ຂ້າແດ່ພຣະເຈົ້າ ເພາະພຣະອົງລອງໃຈຂ້ານ້ອຍທັງຫລາຍ
ພຣະອົງທົດລອງຂ້ານ້ອຍເໝືອນຢ່າງທົດລອງເງິນ
11 ພຣະອົງນຳຂ້ານ້ອຍທັງຫລາຍເຂົ້າມາໃນແຮ້ວ
ພຣະອົງວາງຄວາມທຸກຍາກໄວ້ທີ່ແອວຂອງຂ້ານ້ອຍ
12 ພຣະອົງໃຫ້ຄົນຂັບລົດຮົບທັບຫົວຂອງຂ້ານ້ອຍທັງຫລາຍ
ຂ້ານ້ອຍທັງຫລາຍຕ້ອງລຸຍນ້ຳລຸຍໄຟ
ແຕ່ພຣະອົງຍັງນຳຂ້ານ້ອຍມາສູ່ບ່ອນທີ່ອຸດົມສົມບູນ

13 ຂ້ານ້ອຍຈະເຂົ້າໄປໃນພຣະວິຫານຂອງພຣະອົງພ້ອມດ້ວຍເຄື່ອງເຜົາບູຊາ
ຂ້ານ້ອຍຈະເຮັດຕາມຄຳປະຕິຍານຕໍ່ພຣະອົງ
14 ຕາມທີ່ຮີມປາກຂ້ານ້ອຍໄດ້ເວົ້າໄວ້
ແລະທີ່ປາກຂ້ານ້ອຍໄດ້ກ່າວໃນຍາມທີ່ຂ້ານ້ອຍທຸກຍາກລຳບາກ
15 ຂ້ານ້ອຍຈະຖວາຍສັດຕຸ້ຍພີເປັນເຄື່ອງເຜົາບູຊາແກ່ພຣະອົງ
ພ້ອມກັບຄວັນເຄື່ອງສັດບູຊາດ້ວຍແກະຜູ້
ຂ້ານ້ອຍຈະຖວາຍບູຊາດ້ວຍງົວເຖິກ ແລະແບ້

*ເຊລາ*

16 ບັນດາຜູ້ທີ່ຢຳເກງພຣະເຈົ້າຂໍເຊີນມາຟັງ ແລະຂ້ານ້ອຍຈະບອກເຖິງວ່າ
ພຣະອົງໄດ້ກະທຳຫຍັງແກ່ຈິດວິນຍານຂອງຂ້ານ້ອຍແດ່
17 ປາກຂ້ານ້ອຍໄດ້ຮ້ອງທູນພຣະອົງ ແລະລີ້ນຂ້ານ້ອຍໄດ້ຍົກຍ້ອງພຣະອົງ
18 ຖ້າຂ້ານ້ອຍໄດ້ບົ່ມຄວາມຊົ່ວຊ້າໄວ້ໃນໃຈຂ້ານ້ອຍ
ອົງພຣະຜູ້ເປັນເຈົ້າຈະບໍ່ຮັບຟັງ
19 ແຕ່ພຣະເຈົ້າໄດ້ຮັບຟັງແນ່ແທ້
ພຣະອົງໄດ້ຟັງສຽງຄຳອະທິຖານຂອງຂ້ານ້ອຍ
20 ສາທຸການແດ່ພຣະເຈົ້າ
ເພາະວ່າພຣະອົງບໍ່ປະຕິເສດຄຳອະທິຖານຂອງຂ້ານ້ອຍ
ຫລືຫ້າມຄວາມເມດຕາຂອງພຣະອົງຈາກຂ້ານ້ອຍ

# ບົດທີ 67

## ການຮ້ອງເພງສັນລະເສີນ ແລະການຖວາຍຂອບພຣະຄຸນ

1 ພຣະເຈົ້າຂ້າ ຂໍຊົງເມດຕາກະລຸນາ ແລະອວຍພອນແກ່ພວກຂ້ານ້ອຍ
ຂໍຊົງເບິ່ງແຍງພວກຂ້ານ້ອຍດ້ວຍຄວາມເມດຕາ.

*ເຊລາ*

2 ເພື່ອວ່າທົ່ວທັງໂລກນີ້ຈະຮູ້ຈັກນ້ຳພຣະໄທຂອງພຣະອົງ

ແລະເພື່ອມະນຸດຊາດທັງຫລາຍຈະຮູ້ຈັກການຊ່ອຍໃຫ້ພົ້ນຂອງພຣະອົງ.

3 ພຣະເຈົ້າຂ້າ ຂໍໃຫ້ປະຊາຊົນສັນລະເສີນພຣະອົງ
ຂໍໃຫ້ປະຊາຊົນທັງປວງສັນລະເສີນພຣະອົງ.
4 ຂໍໃຫ້ມະນຸດຊາດທັງຫລາຍຍິນດີ ແລະຮ້ອງເພງຢ່າງມ່ວນຊື່ນ
ເພາະພຣະອົງຊົງປົກຄອງປະຊາຊົນດ້ວຍຄວາມຍຸດຕິທຳ
ແລະຊົງນຳໜ້າຊົນຊາດທັງປວງ.

*ເຊລາ*

5 ພຣະເຈົ້າຂ້າ ຂໍໃຫ້ປະຊາຊົນສັນລະເສີນພຣະອົງ
ຂໍໃຫ້ປະຊາຊົນທັງປວງສັນລະເສີນພຣະອົງ.

6 ແຜ່ນດິນໄດ້ເກີດຜົນໃຫ້ເກັບກ່ຽວ
ເພາະ ພຣະເຈົ້າຂອງພວກເຮົາໄດ້ອວຍພອນພວກເຮົາ.
7 ພຣະເຈົ້າຊົງອວຍພອນພວກເຮົາ
ຂໍໃຫ້ປະຊາຊົນທັງປວງຖວາຍກຽດແດ່ພຣະອົງ.

# ບົດທີ 68

## ການອະທິຖານ ເມື່ອຄົນອິສຣາເອນຍ້າຍຫີບຄຳພັ້ນສັນຍາ ແຫ່ງພຣະຜູ້ເປັນເຈົ້າ

*ເຖິງຫົວໜ້ານັກຮ້ອງ ເພງສັນລະເສີນ ຫລືບົດເພງຂອງດາວິດ*

1 ຂໍພຣະເຈົ້າລຸກຂຶ້ນ ໃຫ້ສັດຕູຂອງພຣະອົງປົວໄປ
ໃຫ້ບັນດາຜູ້ທີ່ກຽດຊັງພຣະອົງໜີໄປຕໍ່ເບື້ອງພຣະພັກພຣະອົງ
2 ຄວັນຖືກຂັບໄລ່ໄປສັນໃດ
ກໍຂໍໄລ່ພວກເຂົາໄປສັນນັ້ນ ຂີ້ເຜີ້ງລະລາຍຕໍ່ໜ້າໄຟສັນໃດ
ກໍຂໍໃຫ້ຄົນຊົ່ວຈິບຫາຍຕໍ່ເບື້ອງພຣະພັກ ພຣະເຈົ້າສັນນັ້ນ
3 ແຕ່ຂໍໃຫ້ຄົນຊອບທຳຊື່ນບານ ໃຫ້ພວກເຂົາເຕັ້ນໂດດຕໍ່ເບື້ອງພຣະພັກ ພຣະເຈົ້າ
ໃຫ້ພວກເຂົາໂຮຮ້ອງດ້ວຍຄວາມຊື່ນບານ

4 ຈົ່ງຮ້ອງເພງຖວາຍ ພຣະເຈົ້າ ຈົ່ງຮ້ອງເພງສັນລະເສີນພຣະນາມຂອງພຣະອົງ
ຈົ່ງຍົກຍ້ອງພຣະອົງຜູ້ຊົງຂີ່ເມກເປັນພາຫະນະ ໂດຍພຣະນາມຂອງພຣະອົງ
ຄື ພຣະຜູ້ເປັນເຈົ້າ ຈົ່ງຮີບມາຢູ່ຕໍ່ເບື້ອງພຣະພັກພຣະອົງ
5 ພຣະເຈົ້າ ໃນທີ່ປະທັບບໍລິສຸດຂອງພຣະອົງ ເປັນ ພຣະບິດາ ຂອງຄົນກຳພ້າພໍ່
ແລະເປັນຜູ້ພິພາກສາແມ່ໝ້າຍ
6 ພຣະເຈົ້າ ໃຫ້ຄົນເປົ່າປ່ຽວອາໄສຢູ່ຕາມບ້ານເຮືອນ
ພຣະອົງປ່ອຍຄົນທັງຫລາຍທີ່ຖືກມັດດ້ວຍໂສ້

ແຕ່ຄົນມັກກະບົດອາໄສໃນແຜ່ນດິນທີ່ແຕກແຫ້ງ
7 ຂ້າແດ່ພຣະເຈົ້າ ເມື່ອພຣະອົງສະເດັດນຳໜ້າປະຊາຊົນຂອງພຣະອົງ
ເມື່ອພຣະອົງສະເດັດໄປຕາມຖິ່ນແຫ້ງແລ້ງກັນດານ

*ເຊລາ*

8 ແຜ່ນດິນໂລກກໍຫວັ່ນໄຫວ
ທ້ອງຟ້າກໍຖອກຝົນລົງມາຕໍ່ເບື້ອງພຣະພັກພຣະເຈົ້າ
ພູເຂົາຊີນາຍສັ່ນສະເທືອນຕໍ່ເບື້ອງພຣະພັກພຣະເຈົ້າ
ຄືພຣະເຈົ້າຂອງອິສຣາເອນ
9 ຂ້າແດ່ພຣະເຈົ້າ ພຣະອົງຊົງໃຫ້ຝົນອຸດົມລົງມາ
ເມື່ອມໍລະດົກຂອງພຣະອົງອ່ອນແອ ພຣະອົງຟື້ນຂຶ້ນໃໝ່
10 ຊຸມນຸມຊົນຂອງພຣະອົງກໍມາອາໄສໃນນັ້ນ ຂ້າແດ່ພຣະເຈົ້າ
ໂດຍຄວາມດີຂອງພຣະອົງ ພຣະອົງຈັດຕຽມໄວ້ໃຫ້ແກ່ຄົນຂັດສົນ

11 ອົງພຣະຜູ້ເປັນເຈົ້າປະທານພຣະທຳ ພວກທີ່ນຳຂ່າວນັ້ນກໍເປັນພວກໃຫຍ່ໂຕ
12 ບັນດາກະສັດຂອງກອງທັບທັງຫລາຍກໍໜີໄປ
ຜູ້ຍິງທີ່ຢູ່ເຮືອນກໍເອົາສິ່ງຂອງທີ່ຍຶດມາໄດ້ ແບ່ງກັນ
13 ເຖິງແມ່ນທ່ານນອນຢູ່ທ່າມກາງຄອກແກະ
ທ່ານກໍຈະເໝືອນປີກນົກເຂົາທີ່ເຄືອບດ້ວຍເງິນ
ແລະຂົນຂອງມັນທີ່ເຄືອບດ້ວຍທອງຄຳ
14 ເມື່ອຜູ້ລິດອຳນາດຕີກະສັດ ຢູ່ບ່ອນນັ້ນ
ມັນກໍຂາວເໝືອນຫິມະທີ່ຕົກລົງເທິງພູເຂົາຊານໂມນ

15 ພູເຂົາຂອງພຣະເຈົ້າ ເໝືອນກັບພູເຂົາເມືອງບາຊານ
ພູເຂົາທີ່ມີຍອດສູງກໍເໝືອນກັບພູເຂົາເມືອງບາຊານ
16 ພູເຂົາທີ່ມີຍອດສູງເອີຍ ເປັນຫຍັງຈຶ່ງເບິ່ງດ້ວຍຄວາມອິດສາ
ທີ່ພູເຂົາຊຶ່ງພຣະເຈົ້າປະສົງໃຫ້ເປັນທີ່ປະທັບຂອງພຣະອົງ
ເອີ ບ່ອນທີ່ພຣະຜູ້ເປັນເຈົ້າຈະປະທັບເປັນນິດ
17 ລົດຮົບຂອງພຣະເຈົ້າ ເປັນສອງໝື່ນຄັນ ຄືມີຜູ້ສົ່ງຂ່າວສະຫວັນນັບເປັນພັນໆ
ອົງພຣະຜູ້ເປັນເຈົ້າສະຖິດຢູ່ທ່າມກາງພວກເຂົາ
ເໝືອນໃນຊີນາຍຄືໃນສະຖານທີ່ບໍລິສຸດ
18 ພຣະອົງສະເດັດຂຶ້ນສູ່ເບື້ອງສູງ ພຣະອົງນຳພວກຊະເລີຍໄປເປັນຊະເລີຍອີກ
ແລະຮັບຂອງປະທານເພື່ອມະນຸດ ແລະຮັບເພື່ອຜູ້ທີ່ກະບົດດ້ວຍ
ເພື່ອພຣະຜູ້ເປັນເຈົ້າພຣະເຈົ້າຈະປະທັບທ່າມກາງພວກເຂົາ
19 ສາທຸການແດ່ອົງພຣະຜູ້ເປັນເຈົ້າຜູ້ຄ້ຳຊູເຮົາທັງຫລາຍຢູ່ທຸກວັນ
ພຣະເຈົ້າຜູ້ເປັນຄວາມພົ້ນຂອງເຮົາ

*ເຊລາ*

20 ພຣະເຈົ້າຂອງເຮົາເປັນພຣະເຈົ້າແຫ່ງຄວາມພົ້ນ
ຊຶ່ງໄດ້ພົ້ນຈາກຄວາມຕາຍນັ້ນກໍຢູ່ທີ່ພຣະເຈົ້າຄືອົງພຣະຜູ້ເປັນເຈົ້າ
21 ແຕ່ພຣະເຈົ້າຈະຕີຫົວຂອງສັດຕູຂອງພຣະອົງໃຫ້ແຕກ
ຄືກະໂຫລກທີ່ມີຜົມຂອງຜູ້ທີ່ຂັດຂືນ ດຳເນີນໃນທາງລະເມີດຂອງພວກເຂົາ

22 ອົງພຣະຜູ້ເປັນເຈົ້າກ່າວວ່າ "ເຮົາຈະນຳພວກເຂົາທັງຫລາຍກັບມາຈາກບາຊານ
ເຮົາຈະນຳປະຊາຊົນຂອງເຮົາກັບມາຈາກບ່ອນເລິກຂອງທະເລ
23 ເພື່ອເຈົ້າຈະເອົາຕີນອາບເລືອດຂອງຄູ່ແຂ່ງຂອງເຈົ້າ
ເພື່ອລີ້ນໝາຂອງເຈົ້າຈະມີສ່ວນດ້ວຍ"
24 ຂ້າແດ່ພຣະເຈົ້າການສະເດັດຂອງພຣະອົງປາກົດແລ້ວ
ການສະເດັດຂອງພຣະເຈົ້າຂອງຂ້ານ້ອຍ
ພຣະມະຫາກະສັດຂອງຂ້ານ້ອຍເຂົ້າໃນສະຖານທີ່ບໍລິສຸດ
25 ນັກຮ້ອງນຳໜ້າ ນັກດົນຕີຄັດທ້າຍ ລະຫວ່າງນັ້ນມີສະຕີຫລິ້ນກອງ
26 ທ່ານທັງຫລາຍຜູ້ເປັນນໍ້າພຸຂອງອິສຣາເອນ
ຈົ່ງສັນລະເສີນພຣະເຈົ້າຄືອົງພຣະຜູ້ເປັນເຈົ້າໃນທີ່ຊຸມນຸມໃຫຍ່
27 ມີເບັນຢາມິນຜູ້ນ້ອຍທີ່ສຸດນຳໜ້າ
ບັນດາເຈົ້ານາຍຢູດາຢູ່ເປັນໝູ່ໃຫຍ່ ເຈົ້ານາຍແຫ່ງເຊບູລູນ
ເຈົ້ານາຍແຫ່ງນັບທາລີ

28 ຂ້າແດ່ພຣະເຈົ້າຂໍຊົງກອານຸພາບຂອງພຣະອົງມາ
ພຣະເຈົ້າບັນຊາພຣະກຳລັງຂອງພຣະອົງ
ພຣະອົງຜູ້ໄດ້ກະທຳເພື່ອຂ້ານ້ອຍທັງຫລາຍ
29 ບັນດາກະສັດຈະນຳຂອງກຳນັນມາຖວາຍພຣະອົງ
ເນື່ອງດ້ວຍພຣະວິຫານຂອງພຣະອົງທີ່ເຢຣູຊາເລັມ
30 ຂໍນາບຂູ່ຄືນທີ່ແຫງດ້ວຍຫອກ ຝູງງົວກັບລູກງົວແຫ່ງຊົນຊາດທັງຫລາຍ
ຈົນພວກເຂົາທຸກຄົນຍິນຍອມດ້ວຍຖວາຍເງິນແຜ່ນ
ຂໍໃຫ້ຊົນຊາດທັງຫລາຍຜູ້ປິຕິຍິນດີໃນສົງຄາມໄດ້ກະຈັດກະຈາຍໄປ
31 ພວກເຈົ້ານາຍຈະອອກມາຈາກເອຢິບ
ເອທີໂອເປຍຈະຮີບຍື່ນມືຂອງຕົນອອກທູນພຣະເຈົ້າ
32 ບັນດາອານາຈັກແຫ່ງແຜ່ນດິນໂລກເອີຍ ຈົ່ງຮ້ອງເພງຖວາຍພຣະເຈົ້າ
ຈົ່ງຮ້ອງເພງສັນລະເສີນອົງພຣະຜູ້ເປັນເຈົ້າ

*ເຊລາ*

33 ຕໍ່ພຣະອົງຜູ້ຊົງສະຖິດເທິງຟ້າສະຫວັນ ຟ້າສະຫວັນດຶກດຳບັນ ເບິ່ງແມ
ພຣະອົງເປັ່ງພຣະສຸລະສຽງຂອງພຣະອົງ ຄືພຣະສຸລະສຽງຜູ້ຊົງລິດອຳນາດ

34 ຈົ່ງຖວາຍລິດທານຸພາບແດ່ພຣະເຈົ້າ
ຊຶ່ງຄວາມສູງສົ່ງຂອງພຣະອົງຢູ່ເໜືອອິສຣາເອນ
ແລະລິດທານຸພາບຂອງພຣະອົງຢູ່ໃນທ້ອງຟ້າ
35 ຂ້າແດ່ພຣະເຈົ້າພຣະອົງຊົງໂກດຮ້າຍໃນສະຖານທີ່ບໍລິສຸດຂອງພຣະອົງ
ຄືພຣະເຈົ້າຂອງອິສຣາເອນ
ພຣະອົງນັ້ນປະທານລິດ ແລະກຳລັງແກ່ປະຊາຊົນຂອງພຣະອົງ
ສາທຸການແດ່ພຣະເຈົ້າ

# ບົດທີ 69

## ດາວິດຮ້ອງທຸກເລື່ອງຄວາມຍາກລຳບາກ

*ເຖິງຫົວໜ້ານັກຮ້ອງ ທຳນອງດອກບົວ ເພງສັນລະເສີນຂອງດາວິດ*

1 ຂ້າແດ່ພຣະເຈົ້າຂໍຊ່ວຍຂ້ານ້ອຍໃຫ້ລອດພົ້ນ
ເພາະນໍ້າຂຶ້ນມາເຖິງຈິດວິນຍານຂ້ານ້ອຍແລ້ວ
2 ຂ້ານ້ອຍຈົມຢູ່ໃນຂີ້ຕົມເລິກບໍ່ມີບ່ອນຢືນ
ຂ້ານ້ອຍມາຢູ່ໃນນໍ້າເລິກ ແລະນໍ້າຖ້ວມຂ້ານ້ອຍ
3 ຂ້ານ້ອຍເບື່ອໜ່າຍໃຈດ້ວຍເຫດຮ້ອງໄຫ້ ຄໍຂອງຂ້ານ້ອຍເຫືອດແຫ້ງໄປ
ຕາຂອງຂ້ານ້ອຍມົວລົງ ດ້ວຍການຄອຍຖ້າພຣະເຈົ້າຂອງຂ້ານ້ອຍ
4 ບັນດາຄົນທີ່ກຽດຊັງຂ້ານ້ອຍໂດຍຂາດເຫດຜົນ
ມີຫລາຍຍິ່ງກວ່າເສັ້ນຜົມເທິງຫົວຂ້ານ້ອຍ
ຄົນທີ່ຈະທຳລາຍຂ້ານ້ອຍກໍມີອິດທິພົນ
ຄືຜູ້ທີ່ເປັນສັດຕູຂອງຂ້ານ້ອຍຢ່າງບໍ່ມີເຫດຜົນ
ແລ້ວຂ້ານ້ອຍໄດ້ສົ່ງຄືນສິ່ງທີ່ຂ້ານ້ອຍບໍ່ໄດ້ລັກໄປ

5 ຂ້າແດ່ພຣະເຈົ້າພຣະອົງຮູ້ເຖິງຄວາມໂງ່ຂອງຂ້ານ້ອຍ
ຄວາມຜິດບາບທີ່ຂ້ານ້ອຍກະທຳແລ້ວບໍ່ໄດ້ເຊື່ອງໄວ້ຈາກພຣະອົງ
6 ຂ້າແດ່ອົງພຣະຜູ້ເປັນເຈົ້າພຣະເຈົ້າຈອມໂຍທາ
ຂໍຢ່າໃຫ້ບັນດາຜູ້ທີ່ຄອຍຖ້າພຣະອົງໄດ້ຮັບຄວາມອັບອາຍ
ເພາະຂ້ານ້ອຍ ຂ້າແດ່ພຣະເຈົ້າຂອງອິສຣາເອນ
ຂໍຢ່າໃຫ້ບັນດາຜູ້ທີ່ຊອກຫາພຣະອົງໄດ້ຮັບ
ຄວາມອັບອາຍເພາະຂ້ານ້ອຍ
7 ທີ່ຂ້ານ້ອຍທົນການເຍາະເຍີ້ຍ
ທີ່ຄວາມອັບອາຍໄດ້ຄຸມໜ້າຂ້ານ້ອຍໄວ້ກໍເພາະເຫັນແກ່ພຣະອົງ
8 ຂ້ານ້ອຍກາຍເປັນແຂກແປກໜ້າຂອງພີ່ນ້ອງ
ແລະເປັນຄົນຕ່າງດ້າວຂອງບຸດແຫ່ງແມ່ຂ້ານ້ອຍ

9 ຄວາມຮ້ອນໃຈໃນເລື່ອງພຣະວິຫານຂອງພຣະອົງໄດ້ຖ້ວມລົ້ນຂ້ານ້ອຍ
ແລະຄຳເວົ້າເຍາະເຍີ້ຍຂອງບັນດາຜູ້ທີ່ເຍາະເຍີ້ຍພຣະອົງຕົກຢູ່ທີ່ຂ້ານ້ອຍ
10 ເມື່ອຂ້ານ້ອຍຮ້ອງໄຫ້ ແລະຖ່ອມໃຈລົງດ້ວຍການອົດອາຫານ
ມັນກາຍເປັນການເຍາະເຍີ້ຍຂ້ານ້ອຍ
11 ຂ້ານ້ອຍໃຊ້ຜ້າກະສອບເປັນເຄື່ອງນຸ່ງຫົ່ມ
ຂ້ານ້ອຍກັບກາຍເປັນຄຳເຍາະເຍີ້ຍຂອງພວກເຂົາ
12 ຄົນທີ່ນັ່ງຢູ່ປະຕູເມືອງກໍເວົ້າຕຳໜິຂ້ານ້ອຍ
ຄົນຂີ້ເມົາແຕ່ງເພງຮ້ອງໃສ່ຂ້ານ້ອຍ

## ການທູນຂໍໃຫ້ພົ້ນໄພ

13 ຂ້າແດ່ພຣະຜູ້ເປັນເຈົ້າ ແຕ່ສ່ວນຂ້ານ້ອຍ
ຂ້ານ້ອຍອະທິຖານຕໍ່ພຣະອົງໃນເວລາອັນເໝາະສົມ ຂ້າແດ່ພຣະເຈົ້າ
ໂດຍຄວາມເມດຕາອັນອຸດົມຂອງພຣະອົງ
ຂໍໂຜດຟັງຂ້ານ້ອຍດ້ວຍຄວາມຈິງແຫ່ງຄວາມພົ້ນຂອງພຣະອົງ
14 ຂໍຊ່ວຍຂ້ານ້ອຍໃຫ້ພົ້ນຈາກການຈົມລົງໃນຂີ້ຕົມ
ຂໍຊ່ວຍຂ້ານ້ອຍໃຫ້ພົ້ນຈາກຄົນທີ່ກຽດຊັງຂ້ານ້ອຍ ແລະຈາກນໍ້າເລິກ
15 ຂໍຢ່າໃຫ້ນໍ້າຖ້ວມຂ້ານ້ອຍ ຫລືນໍ້າທີ່ເລິກກືນຂ້ານ້ອຍ
ຫລືປາກຄວາມຕາຍງັບຂ້ານ້ອຍໄວ້
16 ຂ້າແດ່ພຣະຜູ້ເປັນເຈົ້າຂໍຟັງຂ້ານ້ອຍ
ເພາະຄວາມເມດຕາຂອງພຣະອົງນັ້ນດີເລີດ
ຂໍຫັນມາຫາຂ້ານ້ອຍຕາມພຣະກະລຸນາອັນອຸດົມຂອງພຣະອົງ
17 ຂໍຢ່າເຊື່ອງພຣະພັກຂອງພຣະອົງຈາກຜູ້ຮັບໃຊ້ຂອງພຣະອົງ
ເພາະຂ້ານ້ອຍທຸກໃຈ ຂໍຮີບຟັງຂ້ານ້ອຍ
18 ຂໍມາໃກ້ຈິດວິນຍານຂອງຂ້ານ້ອຍ ຂໍພຣະອົງໄຖ່ຈິດວິນຍານນັ້ນໄວ້
ເພາະສັດຕູຂອງຂ້ານ້ອຍ ຂໍໄຖ່ຂ້ານ້ອຍດ້ວຍ

19 ພຣະອົງຊົງຮູ້ການທີ່ພວກເຂົາເຍາະເຍີ້ຍຂ້ານ້ອຍແລ້ວ ທັງຄວາມອັບອາຍ
ແລະການເສື່ອມເສຍກຽດຂອງຂ້ານ້ອຍ
ບັນດາຄູ່ແຂ່ງຂອງຂ້ານ້ອຍຢູ່ຕໍ່ພຣະພັກພຣະອົງໝົດ
20 ການເຍາະເຍີ້ຍເຮັດໃຫ້ຈິດໃຈຂ້ານ້ອຍເຈັບຊໍ້າ
ຂ້ານ້ອຍຈຶ່ງໝົດກຳລັງໃຈ ຂ້ານ້ອຍຊອກຫາຜູ້ເຫັນອົກເຫັນໃຈ
ແຕ່ກໍບໍ່ມີ ຫາຜູ້ເລົ້າໂລມ ແຕ່ຂ້ານ້ອຍຫາບໍ່ພົບ
21 ພວກເຂົາໃຫ້ບີໜີແກ່ຂ້ານ້ອຍເປັນອາຫານ
ໃຫ້ນໍ້າສົ້ມແກ່ຂ້ານ້ອຍດື່ມແກ້ກະຫາຍ

22 ຂໍໃຫ້ສິ່ງທີ່ຢູ່ຕໍ່ໜ້າພວກເຂົາເອງກາຍເປັນບ້ວງແຮ້ວ
ແລະສິ່ງທີ່ຄວນເປັນຄວາມສຸກສະບາຍ
ຂອງພວກເຂົາໃຫ້ກາຍເປັນເຄື່ອງດັກຈັບ
23 ຂໍໃຫ້ຕາຂອງພວກເຂົາມືດໄປ ເພື່ອພວກເຂົາຈະໄດ້ເບິ່ງບໍ່ເຫັນ
ແລະເຮັດບັ້ນແອວຂອງພວກເຂົາໃຫ້ສັ່ນສະເທືອນເລື້ອຍໄປ
24 ຂໍຖອກຄວາມໂກດຮ້າຍລົງເໜືອພວກເຂົາ
ແລະໃຫ້ຄວາມໂກດຮ້າຍອັນເຜົາຮ້ອນຕາມທັນພວກເຂົາ
25 ຂໍໃຫ້ບ່ອນຢູ່ຂອງພວກເຂົາຮ້າງເປົ່າ ຢ່າໃຫ້ຜູ້ໃດພັກຢູ່ໃນເຕັນຂອງພວກເຂົາ
26 ເພາະພວກເຂົາໄດ້ຂົ່ມເຫງຜູ້ທີ່ພຣະອົງຊົງລົງໂທດ
ພວກເຂົາເວົ້າເຖິງຄວາມເຈັບປວດຂອງຜູ້ທີ່ພຣະອົງຕີໃຫ້ບາດເຈັບແລ້ວ
27 ຂໍເພີ່ມໂທດຄວາມຊົ່ວຊ້າ ແລ້ວເພີ່ມອີກ
ຢ່າໃຫ້ພວກເຂົາໄດ້ຮັບຄວາມຊອບທຳຈາກພຣະອົງ
28 ຂໍໃຫ້ພວກເຂົາຖືກລຶບອອກຈາກທະບຽນແຫ່ງມີຊີວິດ
ຢ່າໃຫ້ພວກເຂົາຂຶ້ນທະບຽນໄວ້ໃນໝູ່ຄົນຊອບທຳ

29 ແຕ່ຂ້ານ້ອຍທຸກຍາກ ແລະມີຄວາມເສົ້າໂສກ ຂ້າແດ່ພຣະເຈົ້າ
ຂໍຄວາມພົ້ນຂອງພຣະອົງຕັ້ງຂ້ານ້ອຍໄວ້ໃຫ້ສູງ
30 ຂ້ານ້ອຍຈະສັນລະເສີນພຣະນາມພຣະເຈົ້າໃນບົດເພງ
ຂ້ານ້ອຍຈະຍົກຍ້ອງພຣະອົງໂດຍໂມທະນາພຣະຄຸນ
31 ການນັ້ນຈະເປັນທີ່ພໍພຣະໄທພຣະຜູ້ເປັນເຈົ້າ
ຫລາຍກວ່າງົວເຖິກ ຫລືງົວເຖິກທີ່ມີເຂົາ ແລະກີບ
32 ບັນດາຜູ້ຖ່ອມໃຈຈະເຫັນ ແລະຍິນດີ ທ່ານຜູ້ຊອກຫາພຣະເຈົ້າ
ຂໍໃຫ້ໃຈຂອງທ່ານຟື້ນຊື່ນບານຂຶ້ນ
33 ເພາະພຣະຜູ້ເປັນເຈົ້າຮັບຟັງຄົນຂັດສົນ
ແລະບໍ່ໄດ້ດູໝິ່ນຄົນຂອງພຣະອົງທີ່ຖືກຈຳຈອງ

34 ຂໍຟ້າສະຫວັນ ແລະແຜ່ນດິນໂລກສັນລະເສີນພຣະອົງ
ທັງທະເລ ແລະສັບພະສິ່ງທີ່ເຄື່ອນໄຫວຢູ່ໃນນັ້ນ
35 ເພາະພຣະເຈົ້າຈະຊ່ວຍຊີໂອນໃຫ້ລອດພົ້ນ
ແລະຈະສ້າງຫົວເມືອງຢູດາຂຶ້ນ
ພວກເຂົາທັງຫລາຍຈະອາໄສຢູ່ບ່ອນນັ້ນ ແລະໄດ້ເປັນກຳມະສິດ
36 ເຊື້ອສາຍຂອງຜູ້ຮັບໃຊ້ຂອງພຣະອົງຈະໄດ້ເປັນມໍລະດົກ
ແລະບັນດາຜູ້ທີ່ຮັກພຣະນາມຂອງພຣະອົງຈະຢູ່ບ່ອນນັ້ນ

# ບົດທີ 70

## ຄຳອະທິຖານເລື່ອງຄົນອະທຳ ແລະຄົນຊອບທຳ

*ເຖິງຫົວໜ້ານັກຮ້ອງ ເພງສັນລະເສີນຂອງດາວິດ ສຳລັບການບູຊາອັນເປັນທີ່ລະນຶກ*

1 ຂ້າແດ່ພຣະເຈົ້າຂໍຮີບມາຊ່ວຍຂ້ານ້ອຍໃຫ້ພົ້ນ ຂ້າແດ່ພຣະຜູ້ເປັນເຈົ້າ
ຂໍມາຊ່ວຍຂ້ານ້ອຍເຖີດ

2 ຂໍໃຫ້ຜູ້ທີ່ໝາຍເອົາຊີວິດຂອງຂ້ານ້ອຍໄດ້ຮັບຄວາມອັບອາຍ
ແລະເກີດຄວາມສັບສົນ
ຂໍໃຫ້ຜູ້ທີ່ປາດຖະໜາຈະໃຫ້ຂ້ານ້ອຍເຈັບນັ້ນ ຕ້ອງຖອຍຫລັງກັບໄປ
ແລະໄດ້ຮັບຄວາມອັບອາຍ
3 ຜູ້ທີ່ເວົ້າວ່າ “ເຮີ້ຍເຮີ້ຍ” ນັ້ນຂໍໃຫ້ຖອຍຫລັງກັບໄປ
ເພາະເປັນຜົນແຫ່ງຄວາມອັບອາຍຂອງພວກເຂົາ

4 ຂໍໃຫ້ບັນດາຜູ້ທີ່ສະແຫວງຫາພຣະອົງຊົມຊື່ນຍິນດີແລະຍິນດີໃນພຣະອົງ
ຂໍໃຫ້ບັນດາຜູ້ທີ່ຮັກຄວາມພົ້ນຂອງພຣະອົງ
ກ່າວສະເໝີວ່າ “ພຣະເຈົ້າຍິ່ງໃຫຍ່”
5 ແຕ່ຂ້ານ້ອຍຍາກຈົນ ແລະຂັດສົນ ຂ້າແດ່ພຣະເຈົ້າ
ຂໍຮີບມາຫາຂ້ານ້ອຍ ຂ້າແດ່ພຣະຜູ້ເປັນເຈົ້າຂໍຢ່າລໍຊ້າ
ພຣະອົງເປັນຜູ້ອຸປະຖຳ ແລະຜູ້ຊ່ວຍໃຫ້ພົ້ນຂອງຂ້ານ້ອຍ

# ບົດທີ 71

## ຄຳອ້ອນວອນຂອງຜູ້ເຖົ້າ

1 ຂ້າແດ່ພຣະຜູ້ເປັນເຈົ້າພຣະອົງເປັນທີ່ເພິ່ງພາຂອງຂ້ານ້ອຍ
ຂໍຢ່າປ່ອຍໃຫ້ຂ້ານ້ອຍພ່າຍແພ້ຈັກເທື່ອ.
2 ເພາະວ່າພຣະອົງຊົງທ່ຽງທຳ
ພຣະອົງຊົງຊ່ອຍຊີວິດຂ້ານ້ອຍໄວ້
ຂໍຊົງຟັງສຽງຂ້ານ້ອຍ ແລະຊົງຊ່ອຍຂ້ານ້ອຍໃຫ້ພົ້ນ.
3 ຂໍພຣະອົງຊົງເປັນບ່ອນພັກພາອາໄສທີ່ປອດໄພຂອງຂ້ານ້ອຍ
ແລະເປັນປ້ອມອັນໝັ້ນຄົງ ເພື່ອຄຸ້ມກັນຂ້ານ້ອຍ
ພຣະອົງຊົງປ້ອງກັນ ແລະເປັນທີ່ເພິ່ງຂອງຂ້ານ້ອຍ.
4 ພຣະເຈົ້າຂອງຂ້ານ້ອຍ ຂໍຊ່ອຍຊີວິດຂ້ານ້ອຍໃຫ້ພົ້ນຈາກເງື້ອມມື
ຂອງຄົນໂຫດຮ້າຍ ແລະຄົນອະທຳ.
5 ຂ້າແດ່ພຣະຜູ້ເປັນເຈົ້າຂ້ານ້ອຍມອບຄວາມຫວັງໄວ້ກັບພຣະອົງ
ຂ້ານ້ອຍເຊື່ອພຣະອົງຕັ້ງແຕ່ຂ້ານ້ອຍຍັງໜຸ່ມ.

6 ຂ້ານ້ອຍໄວ້ໃຈນຳພຣະອົງຕະຫລອດຊົ່ວຊີວິດຂອງຂ້ານ້ອຍ
ເພາະພຣະອົງຊົງຄຸ້ມຄອງຂ້ານ້ອຍຕັ້ງແຕ່ຂ້ານ້ອຍໄດ້ເກີດມາ
ຂ້ານ້ອຍຈະສັນລະເສີນພຣະອົງຕະຫລອດໄປ.
7 ຊີວິດຂ້ານ້ອຍສ້າງຄວາມປະຫລາດໃຈໃຫ້ຫລາຍຄົນ
ແຕ່ພຣະອົງຊົງເປັນທີ່ເພິ່ງທີ່ດີຂອງຂ້ານ້ອຍ.
8 ຂ້ານ້ອຍສັນລະເສີນພຣະອົງ
ແລະປ່າວປະກາດສະຫງ່າລາສີຂອງພຣະອົງຕະຫລອດວັນ.

9 ດຽວນີ້ຂ້ານ້ອຍເຖົ້າແກ່ແລ້ວ ຂໍຢ່າປະຖິ້ມຂ້ານ້ອຍເລີຍ
ແລະດຽວນີ້ຂ້ານ້ອຍອ່ອນແຮງ ຂໍຢ່າປະລະຂ້ານ້ອຍໄປ.
10 ສັດຕູທັງຫລາຍຢາກສັງຫານຂ້ານ້ອຍ
ພວກເຂົາສົນທະນາວາງແຜນອຸບາຍຕໍ່ສູ້ຂ້ານ້ອຍ.
11 ພວກເຂົາເວົ້າວ່າ, “ພຣະເຈົ້າຊົງປະຖິ້ມລາວແລ້ວ
ຂໍໃຫ້ພວກເຮົາຕາມຈັບລາວ
ເພາະວ່າລາວຈະບໍ່ມີໃຜມາຊ່ອຍຊີວິດລາວໄວ້ໄດ້.”
12 ພຣະອົງເຈົ້າຂ້າ ຂໍຢ່າຢູ່ຫ່າງໄກຈາກຂ້ານ້ອຍ
ໂອພຣະເຈົ້າຂອງຂ້ານ້ອຍ ຂໍຊົງຟ້າວມາຊ່ອຍຂ້ານ້ອຍດ້ວຍ.
13 ຂໍໃຫ້ຜູ້ທີ່ຕໍ່ສູ້ຂ້ານ້ອຍຖືກທຳລາຍ ແລະພ່າຍແພ້ໄປ
ຂໍໃຫ້ຜູ້ທີ່ພະຍາຍາມທຳຮ້າຍຂ້ານ້ອຍ
ຖືກອັບອາຍຂາຍໜ້າ ແລະເສື່ອມເສຍກຽດ.
14 ຂ້ານ້ອຍຈະຝາກຄວາມຫວັງໄວ້ກັບພຣະອົງຕະຫລອດໄປ
ຂ້ານ້ອຍຈະສັນລະເສີນພຣະອົງຫລາຍຂຶ້ນກວ່າເກົ່າ.
15 ຂ້ານ້ອຍຈະກ່າວແຕ່ເລື່ອງຄວາມຊອບທຳ
ແລະການຊ່ອຍໃຫ້ພົ້ນຂອງພຣະອົງຕະຫລອດມື້
ເຖິງແມ່ນວ່າຂ້ານ້ອຍບໍ່ເຂົ້າໃຈຄັກ
ຂ້ານ້ອຍກໍຈະຍັງເວົ້າເຖິງຢູ່.
16 ໂອພຣະເຈົ້າຂ້າ ຂ້ານ້ອຍສັນລະເສີນອຳນາດຂອງພຣະອົງ
ຂ້ານ້ອຍຈະປ່າວປະກາດແຕ່ຄວາມຊອບທຳຂອງພຣະອົງເທົ່ານັ້ນ.

17 ຕັ້ງແຕ່ຂ້ານ້ອຍຍັງໜຸ່ມ ພຣະອົງເຄີຍສັ່ງສອນຂ້ານ້ອຍ
ຂ້ານ້ອຍຍັງຈະບອກຄົນອື່ນເຖິງກິດຈະການອັນອັດສະຈັນຂອງພຣະອົງ.
18 ພຣະເຈົ້າຂ້າ ເຖິງແມ່ນວ່າຂ້ານ້ອຍເຖົ້າແກ່ຈົນຜົມຫງອກແລ້ວກໍຕາມ
ຂໍພຣະອົງຢ່າຊົງປະລະຂ້ານ້ອຍເລີຍ
ໃນຂະນະທີ່ຂ້ານ້ອຍປະກາດເຖິງອຳນາດ
ແລະຄວາມຍິ່ງໃຫຍ່ຂອງພຣະອົງແກ່ຄົນລຸ້ນຫລັງ

ຂໍພຣະອົງຊົງສະຖິດຢູ່ກັບຂ້ານ້ອຍ.
19 ພຣະເຈົ້າຂ້າ ຄວາມຊອບທຳຂອງພຣະອົງສູງຈຸຟ້າ
ພຣະອົງຊົງກະທຳການອັນຍິ່ງໃຫຍ່
ບໍ່ມີຜູ້ໃດເໝືອນດັ່ງພຣະອົງ.
20 ພຣະອົງຊົງໃຫ້ຄວາມທຸກຍາກລຳບາກ ແລະການທໍລະມານຕົກຖືກຂ້ານ້ອຍ
ແຕ່ພຣະອົງຈະຊົງເສີມສ້າງເຫື່ອແຮງຂອງຂ້ານ້ອຍຂຶ້ນໃໝ່
ແລະຈະຊົງຮັກສາຂ້ານ້ອຍໃຫ້ພົ້ນຈາກຄວາມຕາຍ.
21 ພຣະອົງຈະຊົງເຮັດໃຫ້ຂ້ານ້ອຍມີຍົດຖາບັນດາສັກຫລາຍກວ່າເກົ່າ
ແລະຈະຊົງປະເລົ້າປະໂລມໃຈຂ້ານ້ອຍ.
22 ຂ້ານ້ອຍຈະສັນລະເສີນພຣະອົງດ້ວຍສຽງພິນ
ພຣະເຈົ້າຂອງຂ້ານ້ອຍ ຂ້ານ້ອຍຈະສັນລະເສີນຄວາມສັດຊື່ຂອງພຣະອົງ
ຂ້ານ້ອຍດີດພິນ ແລະຮ້ອງເພງສັນລະເສີນພຣະອົງ
ຜູ້ຊົງເປັນອົງບໍລິບູນຂອງພວກອິສຣາເອນ.
23 ຂ້ານ້ອຍຈະໂຮຮ້ອງຢ່າງມ່ວນຊື່ນໃນຂະນະທີ່ດີດພິນ
ຂ້ານ້ອຍຈະຮ້ອງເພງດ້ວຍໝົດຈິດໝົດໃຈຂອງຂ້ານ້ອຍ
ເພາະວ່າພຣະອົງຊົງຊ່ອຍຂ້ານ້ອຍໃຫ້ພົ້ນໄພ.
24 ຂ້ານ້ອຍຈະກ່າວແຕ່ຄວາມຊອບທຳຂອງພຣະອົງຕະຫລອດມື້
ເພາະວ່າຜູ້ທີ່ພະຍາຍາມເຮັດອັນຕະລາຍແກ່ຂ້ານ້ອຍ
ຈະຖືກອັບອາຍຂາຍໜ້າ ແລະເສື່ອມເສຍກຽດ.

# ບົດທີ 72

## ດາວິດອະທິຖານ ເພື່ອໂຊໂລໂມນ

*ເພງສັນລະເສີນ ເພື່ອໂຊໂລໂມນ*

1 ຂ້າແດ່ພຣະເຈົ້າຂໍປະທານຄວາມຍຸດຕິທຳຂອງພຣະອົງແກ່ກະສັດ
ແລະຄວາມຊອບທຳຂອງພຣະອົງແກ່ລູກຊາຍ
2 ເພິ່ນຈະໄດ້ພິພາກສາປະຊາຊົນຂອງພຣະອົງດ້ວຍຄວາມຊອບທຳ
ແລະຄົນຍາກຈົນຂອງພຣະອົງດ້ວຍຄວາມຍຸດຕິທຳ
3 ບັນດາພູເຂົາຈະບັງເກີດສັນຕິສຸກສຳລັບປະຊາຊົນ
ແລະໂນນພູໂດຍຄວາມຊອບທຳ
4 ເພິ່ນຈະສູ້ຄະດີຂອງຄົນຍາກຈົນແຫ່ງປະຊາຊົນ
ໃຫ້ການຊ່ອຍໃຫ້ພົ້ນແກ່ລູກຫລານຂອງຄົນຂັດສົນ
ແລະຈະຕີຜູ້ບີບບັງຄັບເປັນທ່ອນໆ
5 ພວກເຂົາຈະຢຳເກງພຣະອົງຕາບທີ່ດວງອາທິດ

ແລະດວງຈັນຄົງຢູ່ ຕະຫລອດທຸກຊົ່ວອາຍຸ
6 ເພິ່ນຈະເປັນເໝືອນຝົນທີ່ຕົກເທິງຫຍ້າທີ່ຕັດແລ້ວ
ເໝືອນຫ່າຝົນທີ່ຫົດແຜ່ນດິນໂລກ
7 ໃນສະໄໝຂອງເພິ່ນຄົນຊອບທຳຈະຈະເລີນຂຶ້ນ
ແລະສັນຕິພາບອັນອຸດົມຈົນບໍ່ມີດວງຈັນ

8 ເພິ່ນຈະຄອບຄອງຈາກທະເລເຖິງທະເລ
ແລະຈາກແມ່ນ້ຳນັ້ນເຖິງທີ່ສຸດປາຍແຜ່ນດິນໂລກ
9 ບັນດາຜູ້ທີ່ຢູ່ໃນຖິ່ນແຫ້ງແລ້ງກັນດານຈະຂາບລົງຕໍ່ເພິ່ນ
ແລະບັນດາສັດຕູຂອງເພິ່ນຈະເລຍຂີ້ຝຸ່ນດິນ
10 ບັນດາກະສັດແຫ່ງເມືອງ ຕາຊິດ
ແລະຂອງເກາະທັງປວງຈະຖວາຍລາຊະບັນນາການ
ບັນດາກະສັດແຫ່ງ ເຊບາ ແລະ ເສບາ ຈະນຳຂອງກຳນັນມາ
11 ກະສັດທັງປວງຈະຂາບລົງໄຫວ້ເພິ່ນ ບັນດາປະຊາຊາດຈະບົວລະບັດເພິ່ນ

12 ເພາະເພິ່ນຈະຊ່ວຍຄົນຂັດສົນໃຫ້ພົ້ນ ເມື່ອລາວຮ້ອງທູນ ຄົນຍາກຈົນ
ແລະຄົນທີ່ຂາດຜູ້ອຸປະຖຳ
13 ເພິ່ນຈະສົງສານຄົນອ່ອນເປ້ຍ ແລະຄົນຂັດສົນ
ແລະຊ່ວຍຊີວິດບັນດາຄົນຂັດສົນ
14 ເພິ່ນຈະໄຖ່ຊີວິດຂອງພວກເຂົາຈາກການຫລອກລວງແລະຄວາມຮຸນແຮງ
ແລະເລືອດຂອງພວກເຂົາຈະປະເສີດໃນສາຍຕາຂອງເພິ່ນ

15 ເພິ່ນຜູ້ນັ້ນຈະມີຊີວິດຍືນຍາວ ຄົນຈະຖວາຍທອງຄຳເມືອງ ເຊບາ ແກ່ເພິ່ນ
ເພິ່ນຈະອະທິຖານເພື່ອເພິ່ນເລື້ອຍໄປ
ແລະຈະອວຍພອນເພິ່ນແຕ່ເຊົ້າຮອດຄໍ່າ
16 ຈະມີເຂົ້າອຸດົມສົມບູນໃນແຜ່ນດິນເທິງຍອດພູເຂົາທັງຫລາຍ
ຜົນຂອງແຜ່ນດິນຈະແກວ່ງໄກວເໝືອນ ເລບານອນ
ແລະຄົນຈາກນະຄອນຈະບານອອກເໝືອນຫຍ້າໃນທົ່ງນາ
17 ນາມຂອງເພິ່ນຈະດຳລົງຢູ່ເປັນນິດ
ຊື່ສຽງຂອງເພິ່ນຈະຍືນຍົງຢ່າງດວງອາທິດ
ຄົນຈະອວຍພອນກັນເອງໂດຍໃຊ້ຊື່ເພິ່ນ
ປະຊາຊາດທັງປວງຈະເອີ້ນເພິ່ນວ່າຜູ້ໄດ້ຮັບພຣະພອນ

18 ສາທຸການແດ່ພຣະຜູ້ເປັນເຈົ້າ ພຣະເຈົ້າ ແຫ່ງ ອິສຣາເອນ
ຜູ້ກະທຳສິ່ງມະຫັດສະຈັນແຕ່ພຣະອົງດຽວ
19 ສາທຸການແດ່ພຣະນາມອັນຮຸ່ງເຮືອງຂອງພຣະອົງເປັນນິດ

ຂໍສະຫງ່າລາສີຂອງພຣະອົງເຕັມໂລກ ອາແມນ ແລະອາແມນ
20 ຄຳອະທິຖານຂອງ ດາວິດ ລູກຊາຍຂອງ ເຢຊີ ຈົບເທົ່ານີ້

# ບົດທີ 73

## ຄວາມຍຸດຕິທຳຂອງພຣະເຈົ້າ

1 ພຣະເຈົ້າ ຊົງດີຕໍ່ພວກ ອິສຣາເອນ ຢ່າງແທ້ຈິງ
ແລະຕໍ່ຜູ້ທີ່ມີຈິດໃຈບໍລິສຸດ.
2 ແຕ່ຝ່າຍຂ້ານ້ອຍ ຂ້ານ້ອຍເກືອບລົ້ມລົງ
ຕີນຂອງຂ້ານ້ອຍເກືອບມື່ນພະລາດໄປ.
3 ເພາະຂ້ານ້ອຍໄດ້ອິດສາຄົນຈອງຫອງ
ຄືຄົນຊົ່ວຮ້າຍທີ່ຈະເລີນຮຸ່ງເຮືອງ.

4 ພວກເຂົາບໍ່ໄດ້ທົນທຸກທໍລະມານ
ພວກເຂົາມີສຸຂະພາບສົມບູນ.
5 ພວກເຂົາບໍ່ໄດ້ທົນທຸກທໍລະມານເໝືອນຄົນອື່ນ
ແລະບໍ່ມີຄວາມຫຍຸ້ງຍາກລຳບາກເໝືອນຢ່າງຄົນອື່ນມີຢູ່.
6 ພວກເຂົາເອົາຄວາມຈອງຫອງເຂົ້າໃສ່ຕົວ ດັ່ງເອົາສາຍສ້ອຍຄ້ອງຄໍໄວ້
ແລະເອົາຄວາມໂຫດຮ້າຍຫຸ້ມຫໍ່ຕົວເໝືອນຫົ່ມເສື້ອຄຸມ.
7 ຫົວໃຈຂອງພວກເຂົາສະແດງອອກແຕ່ຄວາມຊົ່ວຮ້າຍ
ແລະຈິດໃຈຂອງພວກເຂົາກໍເຕັມໄປດ້ວຍກົນອຸບາຍອັນຊົ່ວຮ້າຍ.
8 ພວກເຂົາຫົວຂວັນ ແລະເວົ້າເຍາະເຍີ້ຍຄົນອື່ນ
ພວກເຂົາຈອງຫອງ ແລະເວົ້າແຕ່ຄວາມຊົ່ວ.
9 ພວກເຂົາເວົ້າຄວາມຊົ່ວຊ້າຕໍ່ ພຣະເຈົ້າ ຜູ້ຊົງປະທັບຢູ່ເທິງສະຫວັນຊັ້ນຟ້າ
ແລະອອກຄຳສັ່ງຢ່າງອວດອ້າງຈອງຫອງແກ່ມະນຸດຢູ່ໃນໂລກນີ້.

10 ໄພ່ພົນຂອງ ພຣະເຈົ້າ ຈຶ່ງໄປຫາພວກເຂົາ
ແລະມັກເຊື່ອຄຳເວົ້າຂອງພວກເຂົາ.
11 ພວກເຂົາເວົ້າວ່າ, “ພຣະເຈົ້າບໍ່ຮູ້ຫຍັງດອກ
ພຣະຜູ້ເປັນເຈົ້າຍິ່ງໃຫຍ່ກໍຈະບໍ່ພົບພໍ້ສິ່ງໃດ.”
12 ຄົນຊົ່ວຊ້າກໍເປັນຢ່າງນີ້
ພວກເຂົາມີທຸກສິ່ງອຸດົມສົມບູນ ແລະຈະເລີນຂຶ້ນເລື້ອຍໆ.

13 ການທີ່ຂ້ານ້ອຍເຮັດຕົນໃຫ້ບໍລິສຸດ
ແລະລ້າງມືໃຫ້ສະອາດຈາກຄວາມຜິດນັ້ນ ຈະບໍ່ມີປະໂຫຍດຫຍັງບໍ?
14 ພຣະເຈົ້າຂ້າ ພຣະອົງຊົງເຮັດໃຫ້ຂ້ານ້ອຍທົນທຸກທໍລະມານຕະຫລອດວັນ

ແລະພຣະອົງຊົງລົງໂທດຂ້ານ້ອຍທຸກໆເຊົ້າ.
15 ຫາກວ່າຂ້ານ້ອຍໄດ້ເວົ້າຢ່າງນີ້
ຂ້ານ້ອຍກໍຈະເປັນຄົນບໍ່ສັດຊື່ຕໍ່ໄພ່ພົນຂອງພຣະອົງ.
16 ເຖິງແມ່ນວ່າການນີ້ຍາກເທົ່າໃດກໍຕາມ
ຂ້ານ້ອຍກໍພະຍາຍາມຢ່າງສຸດຄວາມສາມາດ
ເພື່ອໃຫ້ເຂົ້າໃຈເລື່ອງນີ້.
17 ຈົນກວ່າຂ້ານ້ອຍໄດ້ໄປເຖິງພຣະວິຫານຂອງພຣະອົງ
ແລະເຂົ້າໃຈສິ່ງທີ່ຈະເກີດຂຶ້ນກັບຄົນຊົ່ວຮ້າຍນັ້ນ.
18 ແນ່ນອນທີ່ສຸດ ພຣະອົງຊົງປ່ອຍໃຫ້ພວກເຂົາພະລາດລົ້ມ
ແລະໃຫ້ພວກເຂົາຖືກທຳລາຍໄປ.
19 ພວກເຂົາຖືກທຳລາຍໃນບັດດຽວ
ແລະລົງໄປສູ່ຈຸດຈົບອັນໜ້າຢ້ານໃນຂັ້ນສຸດທ້າຍ.
20 ຂ້າແດ່ພຣະຜູ້ເປັນເຈົ້າ ຊີວິດຂອງພວກເຂົາເປັນເໝືອນຄວາມຝັນ
ເມື່ອພຣະອົງຊົງຕື່ນຈາກບັນທົມ
ພຣະອົງກໍລືມສິ່ງທີ່ພວກເຂົາເປັນມານັ້ນ.

21 ເມື່ອຈິດໃຈຂົມຂື່ນ
ຂ້ານ້ອຍຮູ້ສຶກເຈັບປວດ.
22 ຂ້ານ້ອຍເປັນຄົນໂງ່ຈ້າ ແລະຂາດຄວາມເຂົ້າໃຈ
ຕໍ່ພຣະພັກຂອງພຣະອົງ ຂ້ານ້ອຍເຮັດຕົນເໝືອນສັດເດຍລະສານ.
23 ແຕ່ແລ້ວ ຂ້ານ້ອຍກໍຢູ່ກັບພຣະອົງເລື້ອຍມາ
ພຣະອົງຊົງຈູງແຂນຂ້ານ້ອຍໄປ.
24 ພຣະອົງຊົງນຳພາຂ້ານ້ອຍດ້ວຍການຕັກເຕືອນຂອງພຣະອົງ
ແລະໃນທີ່ສຸດພຣະອົງຈະຕ້ອນຮັບຂ້ານ້ອຍດ້ວຍກຽດຕິຍົດ.
25 ນອກຈາກພຣະອົງ ຂ້ານ້ອຍບໍ່ມີຜູ້ໃດອີກໃນສະຫວັນຊັ້ນຟ້າ
ແລະຂ້ານ້ອຍບໍ່ຕ້ອງການເຮັດສິ່ງໃດອີກໃນໂລກນີ້.
26 ຈິດໃຈ ແລະຮ່າງກາຍຂອງຂ້ານ້ອຍອ່ອນແຮງລົງ
ແຕ່ພຣະເຈົ້າຊົງເປັນກຳລັງເຊີດຊູຂ້ານ້ອຍ
ພຣະອົງຊົງເປັນທຸກສິ່ງທີ່ຂ້ານ້ອຍຕ້ອງການຕະຫລອດໄປ.
27 ແນ່ນອນທີ່ສຸດ ຜູ້ທີ່ປະຖິ້ມພຣະອົງໄປຈະຕ້ອງຕາຍ
ແລະຈະຖືກທຳລາຍ.
28 ແຕ່ສຳລັບຂ້ານ້ອຍ ເປັນການດີທີ່ສຸດທີ່ຢູ່ໃກ້ພຣະອົງ
ພຣະອົງເປັນທີ່ເພິ່ງຂອງຂ້ານ້ອຍ
ແລະຂ້ານ້ອຍຈະປະປ່າວປະກາດໃນທຸກໆສິ່ງທີ່ພຣະອົງຊົງກະທຳ.

# ບົດທີ 74

## ຄຳພະຍາກອນໄວ້ທຸກ ເລື່ອງການທຳລາຍກຸງເຢຣູຊາເລັມ

*ເມື່ອພວກອິສຣາເອນຖືກນຳໄປເປັນຊະເລີຍ ມັດຄິນບົດໜຶ່ງຂອງອາຊັບ*

1 ຂ້າແດ່ພຣະເຈົ້າ ເຫດໃດພຣະອົງແກວ່ງຂ້ານ້ອຍທັງຫລາຍຖິ້ມເປັນນິດ
ເຫດໃດຄວາມໂກດຮ້າຍຂອງພຣະອົງ
ພຸ່ງຂຶ້ນຕໍ່ສູ້ຝູງແກະທີ່ຢູ່ທົ່ງຫຍ້າຂອງພຣະອົງ
2 ຂໍລະນຶກເຖິງຊຸມນຸມຊົນຂອງພຣະອົງ ຊຶ່ງພຣະອົງໄຖ່ມາແຕ່ດຶກດຳບັນ
ຊຶ່ງພຣະອົງໄຖ່ໄວ້ໃຫ້ເປັນຕະກູນທີ່ເປັນມໍລະດົກຂອງພຣະອົງ
ຂໍລະນຶກເຖິງພູເຂົາຊີໂອນຊຶ່ງພຣະອົງເຄີຍປະທັບນັ້ນ
3 ຂໍນຳພຣະບາດຂອງພຣະອົງໄປຍັງບ່ອນຮ້າງເພພັງເປັນນິດ
ຄືບັນດາຄວາມຊົ່ວຮ້າຍທີ່ສັດຕູໄດ້ເຮັດໃນສະຖານທີ່ບໍລິສຸດ
4 ພວກຄູ່ແຂ່ງຂອງພຣະອົງແຜດສຽງຢູ່ກາງສະຖານທີ່ປະຊຸມຂອງພຣະອົງ
ພວກເຂົາຕັ້ງທຸງຂອງຕົນເອງໄວ້ເປັນໝາຍສຳຄັນ

5 ຄົນໜຶ່ງຄົນໃດຈະມີຊື່ສຽງເໝືອນຄົນຍົກຂວານຂຶ້ນເໜືອພຸ່ມຕົ້ນໄມ້
6 ແຕ່ບັດນີ້ ບັນດາໄມ້ທີ່ແກະສະຫລັກທັງໝົດ
ກໍເພພັງລົງດ້ວຍຂວານ ແລະຄ້ອນ
7 ພວກເຂົາເອົາໄຟເຜົາສະຖານທີ່ບໍລິສຸດຂອງພຣະອົງ ພວກເຂົາທຳລາຍຄວາມສັກສິດ
ແຫ່ງສະຖານທີ່ທີ່ພຣະນາມຂອງພຣະອົງປະທັບນັ້ນເຖິງດິນ
8 ພວກເຂົາຄິດໃນໃຈວ່າ “ເຮົາຈົ່ງທຳລາຍເຂົາເຈົ້າທັງຫລາຍໃຫ້ໝົດໄປ”
ພວກເຂົາເຜົາບັນດາສະຖານທີ່ປະຊຸມຂອງພຣະເຈົ້າໃນແຜ່ນດິນໝົດ
9 ພວກເຮົາບໍ່ເຫັນໝາຍສຳຄັນທັງຫລາຍຂອງເຮົາ ບໍ່ມີຜູ້ພະຍາກອນອີກແລ້ວ
ໃນພວກເຮົາບໍ່ມີໃຜຮູ້ວ່າດົນເທົ່າໃດ
10 ຂ້າແດ່ພຣະເຈົ້າຄູ່ແຂ່ງຈະເຍາະເຍີ້ຍຢູ່ດົນເທົ່າໃດ
ສັດຕູຈະໝິ່ນປະໝາດພຣະນາມຂອງພຣະອົງເປັນນິດຫລື
11 ເຫດໃດພຣະອົງຈຶ່ງຫົດພຣະຫັດຂອງພຣະອົງ ຄືພຣະຫັດຂວາຂອງພຣະອົງ
ຂໍຢຽດພຣະຫັດຈາກພຣະຊວງຂອງພຣະອົງ

12 ເຖິງປານນັ້ນພຣະເຈົ້າກະສັດຂອງຂ້ານ້ອຍ ຢູ່ແຕ່ດຶກດຳບັນ
ຊົງໃຫ້ມີຄວາມພົ້ນທ່າມກາງແຜ່ນດິນໂລກ
13 ພຣະອົງແຍກທະເລດ້ວຍລິດທານຸພາບຂອງພຣະອົງ
ພຣະອົງຫັກຫົວມັງກອນເທິງນໍ້າ
14 ພຣະອົງຕີຫົວທັງຫລາຍຂອງເລວີອາທານເປັນຕ່ອນໆ
ພຣະອົງປະທານມັນໃຫ້ເປັນອາຫານຂອງຄົນ

ທີ່ອາໄສຢູ່ໃນຖິ່ນແຫ້ງແລ້ງກັນດານ
15 ພຣະອົງແຍກເປີດນໍ້າພຸ ແລະລຳທານ
ພຣະອົງໃຫ້ແມ່ນໍ້າທີ່ໄຫລຢູ່ສະເໝີແຫ້ງໄປ
16 ວັນເປັນຂອງພຣະອົງ ຄືນເປັນຂອງພຣະອົງດ້ວຍ
ພຣະອົງສະຖາປະນາຄວາມສະຫວ່າງ ແລະດວງອາທິດ
17 ພຣະອົງຈັດເຂດທັງໝົດຂອງແຜ່ນດິນໂລກ
ພຣະອົງສ້າງລະດູຮ້ອນ ແລະລະດູໜາວ

18 ຂ້າແດ່ພຣະຜູ້ເປັນເຈົ້າຂໍລະນຶກຂໍ້ນີ້ວ່າ ສັດຕູເຍາະເຍີ້ຍຢ່າງໃດ
ແລະຊົນຊາດໂງ່ໄດ້ໝິ່ນປະໝາດພຣະນາມຂອງພຣະອົງຢ່າງໃດ
19 ຂໍຢ່າມອບວິນຍານນົກເຂົາຂອງພຣະອົງແກ່ຝູງຊົນໂຫດຮ້າຍ
ຂໍຢ່າລືມຊຸມນຸມຊົນຍາກຈົນຂອງພຣະອົງເປັນນິດ
20 ຂໍສົນພຣະໄທໃນຄຳໝັ້ນສັນຍາ
ເພາະສະຖານທີ່ມືດຂອງແຜ່ນດິນເຕັມໄປດ້ວຍບ່ອນຢູ່ຂອງຄວາມຮຸນແຮງ
21 ຂໍຢ່າໃຫ້ຜູ້ທີ່ຖືກບີບບັງຄັບໄດ້ຮັບຄວາມອັບອາຍ
ຂໍໃຫ້ຄົນຈົນ ແລະຄົນຂັດສົນສັນລະເສີນພຣະນາມຂອງພຣະອົງ
22 ຂ້າແດ່ພຣະເຈົ້າຂໍລຸກຂຶ້ນ ສູ້ຄະດີຂອງພຣະອົງ
ຂໍລະນຶກວ່າຄົນໂງ່ເຍາະເຍີ້ຍພຣະອົງຢູ່ແຕ່ເຊົ້າຈົນຄໍ່າ
23 ຂໍຢ່າລືມສຽງຂອງສັດຕູຂອງພຣະອົງ
ສຽງອຶກກະທຶກຂອງຄົນທີ່ລຸກຂຶ້ນຕໍ່ສູ້ພຣະອົງກໍເພີ່ມຂຶ້ນຢູ່ເລື້ອຍໆ

# ບົດທີ 75

## ຄຳສັນຍາວ່າຈະພິພາກສາດ້ວຍຄວາມທ່ຽງທຳ

*ຜູ້ທຳນວາຍສັນລະເສີນພຣະເຈົ້າ ເຖິງຫົວໜ້ານັກຮ້ອງ ທຳນອງຢ່າທຳລາຍ*
*ເພງສັນລະເສີນ ຫລືບົດເພງຂອງອາຊັບ*

1 ຂ້າແດ່ພຣະເຈົ້າຂ້ານ້ອຍທັງຫລາຍຂໍໂມທະນາພຣະຄຸນພຣະອົງ
ຂ້ານ້ອຍທັງຫລາຍຂໍໂມທະນາພຣະອົງ
ເພາະບັນດາພຣະລາຊະກິດມະຫັດສະຈັນຂອງພຣະອົງ
ປະກາດວ່າ ພຣະນາມຂອງພຣະອົງຢູ່ໃກ້
2 ເມື່ອທີ່ປະຊຸມມາຢູ່ຕໍ່ໜ້າເຮົາ ເຮົາຈະພິພາກສາດ້ວຍຄວາມທ່ຽງທຳ
3 ເມື່ອແຜ່ນດິນໂລກລະລາຍ ພ້ອມທັງບັນດາຊາວແຜ່ນດິນໂລກນັ້ນ
ຜູ້ທີ່ຮັກສາເສົາຂອງມັນໃຫ້ໝັ້ນຢູ່ຄືເຮົາເອງ

*ເຊລາ*

4 ເຮົາເວົ້າກັບຄົນໂງ່ຈ້າວ່າ “ຢ່າປະພຶດໂງ່ຈ້າ” ແລະແກ່ຄົນຊົ່ວວ່າ

“ຢ່າຍົກເຂົາຂຶ້ນ
5 ຢ່າຍົກເຂົາຂອງເຈົ້າຂຶ້ນໃຫ້ສູງ ຫລືເວົ້າຈາຢ່າງຄຳແຂງ”

6 ເພາະການຍົກຂຶ້ນນັ້ນບໍ່ໄດ້ມາຈາກທິດຕາເວັນອອກຫລືທິດຕາເວັນຕົກ
ແລະບໍ່ແມ່ນມາຈາກທິດໃຕ້
7 ແຕ່ພຣະເຈົ້າເປັນຜູ້ພິພາກສາ ພຣະອົງໃຫ້ຄົນໜຶ່ງລົງມາ
ແລະຍົກອີກຄົນໜຶ່ງຂຶ້ນໄປ
8 ເພາະໃນພຣະຫັດຂອງພຣະຜູ້ເປັນເຈົ້າມີຖ້ວຍໜ່ວຍໜຶ່ງ
ມີນໍ້າອະງຸ່ນເປັນຟອງ ປະສົມໄວ້ດີ
ພຣະອົງຖອກນໍ້າດື່ມຈາກຖ້ວຍນັ້ນ
ແລະຄົນຊົ່ວຂອງແຜ່ນດິນໂລກທັງໝົດຈະດື່ມໝົດ

9 ແຕ່ຂ້ານ້ອຍຈະປະກາດເປັນນິດ
ຂ້ານ້ອຍຈະຮ້ອງເພງສັນລະເສີນພຣະເຈົ້າຂອງຢາໂຄບ

10 “ເຮົາຈະຕັດເຂົາຂອງຄົນຊົ່ວອອກໝົດ
ແຕ່ເຂົາຂອງຜູ້ຊອບທຳຈະຖືກເຊີດຊູຂຶ້ນ”

# ບົດທີ 76

## ການປະກາດເຖິງຄວາມໃຫຍ່ໂຕມະໂຫລານ ຂອງພຣະເຈົ້າ

*ເຖິງຫົວໜ້ານັກຮ້ອງໃຊ້ເຄື່ອງສາຍ ເພງສັນລະເສີນ ຫລືບົດເພງຂອງອາຊັບ*

1 ໃນຢູດາພວກເຂົາຮູ້ຈັກພຣະເຈົ້າໃນອິສຣາເອນພຣະນາມຂອງພຣະອົງຍິ່ງໃຫຍ່
2 ຜາສາດຂອງພຣະອົງຕັ້ງຢູ່ໃນເຢຣູຊາເລັມທີ່ປະທັບຂອງພຣະອົງຢູ່ໃນຊີໂອນ
3 ບ່ອນນັ້ນ ພຣະອົງຫັກລູກທະນູ ທັງໂລ່ ດາບ ແລະເຄື່ອງຍຸດທະພັນ

*ເຊລາ*

4 ພຣະອົງຮຸ່ງເຮືອງສູງສົ່ງຍິ່ງກວ່າພູເຂົາທີ່ມີການຍາດຊີງເອົາ
5 ດ້ວຍວ່າຄົນໃຈເຂັ້ມແຂງຖືກຍຶດສິ່ງຂອງ ພວກເຂົານອນຫລັບໄປ
ຊາຍໜຸ່ມທັງໝົດບໍ່ສາມາດໃຊ້ມືຂອງຕົນອີກແລ້ວ
6 ຂ້າແດ່ພຣະເຈົ້າຂອງຢາໂຄບ ເມື່ອພຣະອົງນາບຂູ່ທັງລົດມ້າ
ແລະມ້າກໍລ່ວງລັບໄປ

7 ແຕ່ພຣະອົງເຈົ້າ ພຣະອົງເປັນທີ່ໜ້າຢຳເກງ
ເມື່ອພຣະອົງໂກດຮ້າຍຂຶ້ນແລ້ວ ໃຜຈະຢືນໃນສາຍພຣະເນດຂອງພຣະອົງໄດ້
8 ພຣະອົງກ່າວຄຳພິພາກສາມາຈາກຟ້າສະຫວັນ
ແຜ່ນດິນໂລກກໍຢ້ານ ແລະມິດງຽບ

9 ເມື່ອພຣະເຈົ້າລຸກຂຶ້ນພິພາກສາ
ເພື່ອຊ່ວຍຜູ້ຖ່ອມຕົວທັງໝົດຂອງແຜ່ນດິນໂລກໃຫ້ລອດພົ້ນ

*ເຊລາ*

10 ແທ້ແລ້ວ ຄວາມຮ້າຍຂອງມະນຸດຈະສັນລະເສີນພຣະອົງ
ແລະຄວາມຮ້າຍທີ່ເຫລືອຢູ່ນັ້ນພຣະອົງຈະຫ້າມໄວ້
ຈົ່ງບົວລະບັດພຣະເຈົ້າດ້ວຍຄວາມຢຳເກງ

11 ຈົ່ງປະຕິຍານຕໍ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານທັງຫລາຍ
ແລະຈົ່ງປະຕິບັດຕາມ
ໃຫ້ຄົນທີ່ຢູ່ຮອບພຣະອົງນຳຂອງກຳນັນມາຍັງພຣະອົງ ຜູ້ຊຶ່ງພວກເຂົາຄວນຢຳເກງ
12 ພຣະອົງຈະທຳລາຍວິນຍານຂອງເຈົ້ານາຍ
ພຣະອົງເປັນທີ່ໜ້າຢຳເກງແກ່ບັນດາກະສັດແຫ່ງແຜ່ນດິນໂລກ

# ບົດທີ 77

## ນັກແຕ່ງເພງສັນລະເສີນສູ້ກັບຄວາມບໍ່ວາງໃຈ

*ເຖິງຫົວໜ້ານັກຮ້ອງ ທຳນອງເຢດູທູນ ເພງສັນລະເສີນຂອງອາສັບ*

1 ຂ້ານ້ອຍຮ້ອງທູນຕໍ່ພຣະເຈົ້າດ້ວຍສຽງຂອງຂ້ານ້ອຍ
ທູນຕໍ່ພຣະເຈົ້າດ້ວຍສຽງຂອງຂ້ານ້ອຍ
ແລະພຣະອົງໄດ້ຫງ່ຽງພຣະກັນຮັບຟັງຂ້ານ້ອຍ
2 ໃນວັນຍາກລຳບາກຂອງຂ້ານ້ອຍ
ຂ້ານ້ອຍສະແຫວງຫາອົງພຣະຜູ້ເປັນເຈົ້າ
ໃນກາງຄືນເລືອດ ຂອງຂ້ານ້ອຍໄຫລອອກບໍ່ຢຸດ
ຈິດໃຈຂອງຂ້ານ້ອຍບໍ່ໄດ້ຮັບຄຳເລົ້າໂລມ
3 ຂ້ານ້ອຍລະນຶກເຖິງພຣະເຈົ້າຂ້ານ້ອຍກໍຄວນຄາງ ຂ້ານ້ອຍຮ້ອງ
ຈິດໃຈຂອງຂ້ານ້ອຍກໍເບື່ອໜ່າຍໄປ

*ເຊລາ*

4 ພຣະອົງຈັບໜັງຕາຂອງຂ້ານ້ອຍໄວ້ບໍ່ໃຫ້ປິດ
ຂ້ານ້ອຍທຸກຫລາຍຈົນເວົ້າບໍ່ອອກ
5 ຂ້ານ້ອຍພິຈາລະນາເຖິງສະໄໝກ່ອນ
ຂ້ານ້ອຍຈື່ປີທີ່ດົນນານມາແລ້ວໄດ້
6 ຂ້ານ້ອຍລະນຶກເຖິງບົດເພງຂອງຂ້ານ້ອຍໃນກາງຄືນ
ຂ້ານ້ອຍຕຶກຕອງກັບຈິດໃຈຂອງຕົນເອງ
ແລະຈິດວິນຍານຂອງຂ້ານ້ອຍກໍຊອກຫາ

7 "ອົງພຣະຜູ້ເປັນເຈົ້າຈະປະຖິ້ມເປັນນິດ ແລະຈະບໍ່ເຄີຍພໍພຣະໄທອີກຫລື

8 ຄວາມເມດຕາຂອງພຣະອົງຈະລະງັບຢູ່ເປັນນິດຫລື
พຣະສັນຍາຂອງພຣະອົງສິ້ນສຸດຕະຫລອດທຸກຊົ່ວອາຍຸຫລື
9 ພຣະເຈົ້າລືມທີ່ຈະພຣະກະລຸນາຫລື
ເພາະພຣະພິໂລດພຣະອົງຈຶ່ງປິດຄວາມອີດູຫລື"

*ເຊລາ*

10 ແລະຂ້ານ້ອຍວ່າ "ນັ້ນແຫລະ ເປັນຄວາມທຸກຂອງຂ້ານ້ອຍ
ແຕ່ຂ້ານ້ອຍຈະລະນຶກເຖິງປີທັງຫລາຍ
ແຫ່ງພຣະຫັດຂວາຂອງພຣະອົງຜູ້ສູງສຸດ"
11 ຂ້ານ້ອຍຈະລະນຶກເຖິງພຣະລາຊະກິດທັງປວງຂອງ ພຣະຜູ້ເປັນເຈົ້າ
ພຣະເຈົ້າຂ້າ ຂ້ານ້ອຍຈະຈົດຈຳບັນດາການອັດສະຈັນ
ຂອງພຣະອົງໃນສະໄໝກ່ອນໆ
12 ຂ້ານ້ອຍຈະຕຶກຕອງເຖິງພຣະລາຊະກິດທັງໝົດຂອງພຣະອົງ
ແລະກ່າວເຖິງພຣະລາຊະກິດຂອງພຣະອົງ

13 ຂ້າແດ່ພຣະເຈົ້າ ວິທີການຂອງພຣະອົງຢູ່ໃນສະຖານທີ່ບໍລິສຸດ
ພະໃດຈະຍິ່ງໃຫຍ່ຢ່າງ ພຣະເຈົ້າຂອງເຮົາ
14 ພຣະອົງຄື ພຣະເຈົ້າຜູ້ກະທຳການອັດສະຈັນ
ຜູ້ສະແດງລິດທານຸພາບຂອງພຣະອົງທ່າມກາງຊົນຊາດທັງຫລາຍ
15 ພຣະອົງໄດ້ໄຖ່ປະຊາຊົນຂອງພຣະອົງດ້ວຍພຣະກອນຂອງພຣະອົງ
ຄືລູກຫລານຂອງຢາໂຄບ ແລະ ໂຢເຊັບ

*ເຊລາ*

16 ຂ້າແດ່ພຣະເຈົ້າ ເມື່ອນ້ຳເຫັນພຣະອົງ ນ້ຳເຫັນພຣະອົງ
ມັນກໍຢຳເກງແນ່ແທ້ ບ່ອນເລິກກໍສັ່ນສະທ້ານ
17 ເມກຖອກນ້ຳລົງມາ ທ້ອງຟ້າກໍຄະນອງສຽງ
ລູກທະນູຂອງພຣະອົງກໍປິວໄປປິວມາ
18 ຟ້າຜ່າຂອງພຣະອົງມີສຽງຢູ່ໃນຟ້າສະຫວັນ ຟ້າແມບເຮັດໃຫ້ໂລກສະຫວ່າງ
ແຜ່ນດິນໂລກກໍສັ່ນສະເທືອນແລະຫວັ່ນໄຫວ
19 ເສັ້ນທາງຂອງພຣະອົງຢູ່ໃນທະເລ
ການດຳເນີນຊີວິດຂອງພຣະອົງຢູ່ໃນນ້ຳອັນກວ້າງໃຫຍ່
ໄພສານທັງຫລາຍ ເຖິງປານນັ້ນຮອຍພຣະບາດຂອງພຣະອົງກໍບໍ່ມີໃຜຮູ້
20 ພຣະອົງນຳປະຊາຊົນຂອງພຣະອົງ ໂດຍມືຂອງ ໂມເຊ
ແລະ ອາໂຣນ ເໝືອນຝູງແບ້ແກະ

# ບົດທີ 78

## ຄົນອິສຣາເອນຈະສອນລູກຫລານເລື່ອງຄວາມດີຂອງພຣະເຈົ້າ

*ມັດຄີນບົດໜຶ່ງຂອງອາຊັບ*

1 ປະຊາຊົນຂອງຂ້ານ້ອຍເອີຍ ຈົ່ງຫງ່ງງຫູຟັງກົດຂອງຂ້ານ້ອຍ
ຫງ່ງງຫູຂອງທ່ານທັງຫລາຍຟັງຖ້ອຍຄຳຈາກປາກຂ້ານ້ອຍ
2 ຂ້ານ້ອຍຈະອ້າປາກກ່າວຄຳອຸປະມາ
ຂ້ານ້ອຍຈະກ່າວຄຳເລິກລັບຂອງບູຮານ
3 ເຖິງສິ່ງທີ່ເຮົາທັງຫລາຍໄດ້ຍິນໄດ້ຮູ້ ທີ່ບັນພະບູລຸດຂອງເຮົາໄດ້ບອກເຮົາ
4 ເຮົາຈະບໍ່ເຊື່ອງໄວ້ຈາກລູກຫລານຂອງພວກເຂົາ
ແຕ່ຈະບອກແກ່ຊົ່ວອາຍຸທີ່ກຳລັງເກີດມາ
ເຖິງການສັນລະເສີນ ພຣະຜູ້ເປັນເຈົ້າ ແລະລິດທານຸພາບຂອງພຣະອົງ
ແລະການອັດສະຈັນ ຊຶ່ງພຣະອົງໄດ້ຊົງກະທຳ
5 ເພາະພຣະອົງສະຖາປະນາພຣະໂອວາດໄວ້ໃນຢາໂຄບ
ແລະແຕ່ງຕັ້ງກົດໝາຍໄວ້ໃນອິສຣາເອນ
ຊຶ່ງພຣະອົງບັນຊາແກ່ບັນພະບູລຸດຂອງເຮົາ
ວ່າໃຫ້ແຈ້ງເລື່ອງລາວເຫລົ່ານັ້ນແກ່ລູກຫລານຂອງພວກເຂົາ
6 ເພື່ອລຸ້ນຕໍ່ໄປຈະຮູ້ເລື່ອງຄື ລູກຫລານທີ່ຈະເກີດມາ
ແລະທີ່ຈະລຸກຂຶ້ນບອກລູກຫລານຂອງພວກເຂົາຕໍ່
7 ເພື່ອພວກເຂົາຈະຕັ້ງຄວາມຫວັງຂອງຕົນໄວ້ໃນ ພຣະເຈົ້າ
ແລະບໍ່ລືມພຣະລາຊະກິດຂອງ ພຣະເຈົ້າ
ແຕ່ຮັກສາພຣະບັນຍັດຂອງພຣະອົງ
8 ແລະເພື່ອພວກເຂົາຈະບໍ່ໄດ້ເປັນເໝືອນບັນພະບູລຸດຂອງຕົນ
ຄືພວກທີ່ດື້ດ້ານ ແລະມັກກະບົດ ພວກທີ່ມີຈິດໃຈບໍ່ໝັ້ນຄົງ
ຜູ້ຊຶ່ງຈິດວິນຍານຂອງພວກເຂົາບໍ່ໝັ້ນຄົງຕໍ່ ພຣະເຈົ້າ

9 ບັນດາຄົນ ເອຟຣາຢິມ ມີອາວຸດພ້ອມ ແລະຖືຄັນທະນູ
ໄດ້ຖອຍຫລັງກັບໃນວັນສົງຄາມ
10 ພວກເຂົາທັງຫລາຍບໍ່ໄດ້ຮັກສາຄຳໝັ້ນສັນຍາຂອງ ພຣະເຈົ້າ
ແລະປະຕິເສດທີ່ຈະຍ່າງຕາມພຣະບັນຍັດຂອງພຣະອົງ
11 ພວກເຂົາລືມສິ່ງທີ່ພຣະອົງໄດ້ກະທຳ ແລະການອັດສະຈັນ
ຊຶ່ງພຣະອົງສະແດງແກ່ພວກເຂົາ
12 ພຣະອົງກະທຳການອັດສະຈັນໃນສາຍຕາຂອງບັນພະບູລຸດຂອງພວກເຂົາ
ໃນແຜ່ນດິນ ເອຢິບ ໃນໄຮ່ນາ ໂຊອານ
13 ພຣະອົງແຍກທະເລ ແລະໃຫ້ພວກເຂົາຍ່າງຜ່ານໄປ

ແລະເຮັດໃຫ້ນໍ້າຕັ້ງຢູ່ເໝືອນກອງສູງ
14 ໃນກາງເວັນ ພຣະອົງນຳພວກເຂົາດ້ວຍເມກ ແລະດ້ວຍແສງໄຟໝົດຄືນຈົນຮຸ່ງເຊົ້າ
15 ພຣະອົງຜ່າຫີນໃນຖິ່ນແຫ້ງແລ້ງກັນດານ
ປະທານນໍ້າເປັນຈຳນວນຫລາຍໃຫ້ພວກເຂົາດື່ມເໝືອນມາຈາກທີ່ເລິກ
16 ພຣະອົງເຮັດໃຫ້ລຳທານອອກມາຈາກຫີນ
ເຮັດໃຫ້ນໍ້າໄຫລລົງມາເໝືອນແມ່ນໍ້າ

17 ແຕ່ພວກເຂົາຍັງເຮັດບາບຫລາຍຂຶ້ນຕໍ່ພຣະອົງ
ໄດ້ກະບົດຕໍ່ອົງຜູ້ສູງສຸດໃນທີ່ແຫ້ງແລ້ງກັນດານ
18 ພວກເຂົາທົດລອງ ພຣະເຈົ້າ ຢູ່ໃນໃຈຂອງຕົນໂດຍຮຽກຮ້ອງອາຫານທີ່ພວກເຂົາຢາກ
19 ພວກເຂົາເວົ້າຕໍ່ສູ້ ພຣະເຈົ້າ ວ່າ
“ພຣະເຈົ້າ ຈະຕຽມໂຕະອາຫານໃນຖິ່ນແຫ້ງແລ້ງກັນດານໄດ້ຫລື”
20 ເບິ່ງແມ ພຣະອົງຕີຫີນໃຫ້ນໍ້າພຸອອກມາ ແລະລຳທານກໍໄຫລລົ້ນ
ພຣະອົງຈະປະທານເຂົ້າຈີ່ອີກໄດ້ຫລື
ຫລືຈັດຊີ້ນໃຫ້ປະຊາຊົນຂອງພຣະອົງໄດ້ຫລື
21 ເພາະສະນັ້ນ ເມື່ອ ພຣະຜູ້ເປັນເຈົ້າ ຮັບຟັງແລ້ວ ພຣະອົງພຣະພິໂລດ
ມີໄຟລຸກພຸ່ງຂຶ້ນຕໍ່ສູ້ ຢາໂຄບ ພຣະພິໂລດຂອງພຣະອົງສູງຂຶ້ນຕໍ່ສູ້ ອິສຣາເອນ
22 ເພາະພວກເຂົາບໍ່ເຊື່ອ ພຣະເຈົ້າ ແລະບໍ່ໄວ້ວາງໃຈໃນຄວາມພົ້ນຂອງພຣະອົງ
23 ພຣະອົງຍັງບັນຊາເມກເບື້ອງເທິງ ແລະເປີດປະຕູຟ້າສະຫວັນ
24 ພຣະອົງຫລັ່ງ ມານາ ໃຫ້ພວກເຂົາຮັບປະທານ ແລະປະທານອາຫານທິບໃຫ້ພວກເຂົາ
25 ມະນຸດໄດ້ກິນອາຫານຂອງທູດສະຫວັນ
ພຣະອົງປະທານອາຫານໃຫ້ພວກເຂົາຢ່າງອຸດົມສົມບູນ
26 ພຣະອົງເຮັດໃຫ້ລົມຕາເວັນອອກພັດໃນຟ້າສະຫວັນ
ແລະນຳລົມໃຕ້ອອກມາດ້ວຍລິດຂອງພຣະອົງ
27 ພຣະອົງເທຊີ້ນໃຫ້ພວກເຂົາເໝືອນຢ່າງຝຸ່ນຄື ຄືນົກ ດັ່ງເມັດຊາຍໃນທະເລ
28 ພຣະອົງໃຫ້ມັນຕົກລົງມາກາງຄ້າຍຂອງພວກເຂົາ
ແລະອ້ອມຮອບທີ່ຢູ່ອາໄສຂອງພວກເຂົາ
29 ພວກເຂົາໄດ້ຮັບປະທານອີ່ມດີ ເພາະພຣະອົງປະທານສິ່ງທີ່ພວກເຂົາຢາກ
30 ແຕ່ກ່ອນທີ່ພວກເຂົາຈະອີ່ມ ຂະນະທີ່ອາຫານຍັງຢູ່ໃນປາກຂອງພວກເຂົາ
31 ພຣະພິໂລດຂອງ ພຣະເຈົ້າ ພຸ່ງຂຶ້ນຕໍ່ພວກເຂົາ
ແລະພຣະອົງສັງຫານຄົນໜຸ່ມທີ່ສຸດຂອງພວກເຂົາ
ແລະລົ້ມຄົນທີ່ຄັດເລືອກແລ້ວໃນ ອິສຣາເອນ

32 ເຖິງຈະມີເລື່ອງທັງໝົດນີ້ ພວກເຂົາກໍຍັງເຮັດບາບ
ພວກເຂົາບໍ່ໄດ້ເຊື່ອຖືການອັດສະຈັນຂອງພຣະອົງ

33 ພຣະອົງຈຶ່ງເຮັດໃຫ້ວັນເວລາຂອງພວກເຂົາຫາຍໄປດັ່ງສິ່ງທີ່ບໍ່ມີປະໂຫຍດ
ແລະໃຫ້ປີຂອງພວກເຂົາລ່ວງໄປດ້ວຍຄວາມຍາກລຳບາກ
34 ເມື່ອພຣະອົງສັງຫານພວກເຂົາ ພວກເຂົາສະແຫວງຫາພຣະອົງ
ພວກເຂົາໄດ້ກັບມາສະແຫວງຫາພຣະເຈົ້າດ້ວຍໃຈຮ້ອນຮົນ
35 ພວກເຂົາລະນຶກວ່າພຣະເຈົ້າເປັນສີລາຂອງຕົນ
ແລະພຣະເຈົ້າອົງສູງສຸດເປັນພຣະຜູ້ໄຖ່ຂອງຕົນ
36 ແຕ່ພວກເຂົາຍົກຍໍພຣະອົງດ້ວຍປາກເທົ່ານັ້ນ
ແລະຂີ້ຕົວະຕໍ່ພຣະອົງດ້ວຍລີ້ນຂອງຕົນ
37 ເພາະຈິດໃຈຂອງພວກເຂົາບໍ່ໄດ້ຕັ້ງໝັ້ນຄົງຕໍ່ພຣະອົງ
ພວກເຂົາບໍ່ຈິງຈັງຕໍ່ຄຳໝັ້ນສັນຍາຂອງພຣະອົງ
38 ເຖິງປານນັ້ນດ້ວຍຄວາມອີດູຕົນ ພຣະອົງຊົງອະໄພຄວາມຊົ່ວຊ້າຂອງພວກເຂົາ
ແລະບໍ່ໄດ້ທຳລາຍພວກເຂົາ ພຣະອົງຫ້າມພຣະພິໂລດຂອງພຣະອົງເລື້ອຍໆ
ແລະບໍ່ໄດ້ປຸກພຣະພິໂລດຂອງພຣະອົງທັງໝົດໃຫ້ຂຶ້ນມາ
39 ພຣະອົງລະນຶກວ່າພວກເຂົາເປັນພຽງແຕ່ເນື້ອໜັງ
ເປັນລົມທີ່ຜ່ານໄປແລ້ວບໍ່ໄດ້ກັບມາອີກ

40 ພວກເຂົາກະບົດພຣະອົງໃນຖິ່ນແຫ້ງແລ້ງກັນດານເລື້ອຍໆຫລາຍເທົ່າໃດ
ແລະເຮັດໃຫ້ພຣະອົງເຄືອງໃຈໃນທະເລຊາຍ
41 ແຕ່ພວກເຂົາຍັງໄດ້ທົດລອງພຣະເຈົ້າອີກ
ແລະໄດ້ເຮັດໃຫ້ອົງບໍລິສຸດຂອງອິສຣາເອນເສຍພຣະໄທ
42 ພວກເຂົາບໍ່ໄດ້ລະນຶກເຖິງພຣະຫັດຂອງພຣະອົງ
ຫລືມື້ທີ່ພຣະອົງຊ່ວຍພວກເຂົາໃຫ້ພົ້ນຈາກສັດຕູຂອງຕົນ
43 ເມື່ອພຣະອົງສະແດງໝາຍສຳຄັນຂອງພຣະອົງໃນເອຢິບ
ແລະການອັດສະຈັນຂອງພຣະອົງໃນໄຮ່ນາໂຊອານ
44 ພຣະອົງປ່ຽນແມ່ນ້ຳ ແລະລຳທານຂອງພວກເຂົາໃຫ້ເປັນເລືອດ
ເພື່ອພວກເຂົາຈະດື່ມຫຍັງບໍ່ໄດ້
45 ພຣະອົງສົ່ງຝູງເຫລືອບມາທ່າມກາງພວກເຂົາ ຊຶ່ງຜານພວກເຂົາ
ແລະກົບ ຊຶ່ງທຳລາຍພວກເຂົາ
46 ພຣະອົງປະທານພືດຜົນຂອງພວກເຂົາແກ່ຕັກແຕນ
ແລະຜົນງານອອກແຮງຂອງພວກເຂົາແກ່ຕັກແຕນ
47 ພຣະອົງທຳລາຍເຄືອອະງຸ່ນຂອງພວກເຂົາດ້ວຍໝາກເຫັບ
ແລະຕົ້ນເດື່ອຂອງພວກເຂົາດ້ວຍນ້ຳໝອກແຂງ
48 ພຣະອົງມອບຝູງງົວຂອງພວກເຂົາໄວ້ກັບໝາກເຫັບ
ແລະຝູງແບ້ແກະຂອງພວກເຂົາກັບຟ້າຜ່າ

49 ພຣະອົງປ່ອຍຄວາມໂກດຮ້າຍຂອງພຣະອົງມາເໜືອພວກເຂົາ ທັງພຣະພິໂລດ
ຄວາມໂກດຮ້າຍ ແລະຄວາມທຸກລຳບາກ
ໂດຍສິ່ງເຫລົ່າທູດສະຫວັນຊົ່ວຮ້າຍທ່າມກາງພວກເຂົາ
50 ພຣະອົງເປີດການດຳເນີນຊີວິດໃຫ້ແກ່ຄວາມໂກດຮ້າຍຂອງພຣະອົງ
ພຣະອົງບໍ່ໄດ້ເວັ້ນຈິດວິນຍານພວກເຂົາໄວ້ຈາກຄວາມຕາຍ
ແຕ່ປະທານຊີວິດຂອງພວກເຂົາແກ່ພະຍາດລະບາດ
51 ພຣະອົງປະຫານລູກຫົວປີທັງໝົດໃນ ເອຢິບ
ຄືຜົນທຳອິດແຫ່ງເຫື່ອແຮງຂອງພວກເຂົາໃນເຕັນຂອງ ຮາມ
52 ແລ້ວພຣະອົງນຳປະຊາຊົນຂອງພຣະອົງອອກມາເໝືອນນຳແກະ
ແລະນຳພວກເຂົາໄປໃນຖິ່ນແຫ້ງແລ້ງກັນດານເໝືອນຝູງແບ້ແກະ
53 ພຣະອົງນຳພວກເຂົາໄປຢ່າງປອດໄພ ພວກເຂົາຈຶ່ງບໍ່ຢ້ານ
ແຕ່ທະເລຖ້ວມສັດຕູຂອງພວກເຂົາ
54 ແລະພຣະອົງພາພວກເຂົາມາຍັງເຂດແດນແຫ່ງສະຖານທີ່ບໍລິສຸດຂອງພຣະອົງ
ຍັງພູເຂົານີ້ ຊຶ່ງພຣະຫັດຂວາຂອງພຣະອົງໄດ້ໄຖ່ໄວ້
55 ພຣະອົງຂັບໄລ່ປະຊາຊາດຕ່າງໆອອກໄປຕໍ່ໜ້າພວກເຂົາ
ພຣະອົງແບ່ງປັນດິນແດນປະຊາຊາດນັ້ນໃຫ້ເປັນມໍລະດົກ
ແລະຕັ້ງບັນດາຕະກູນ ອິສຣາເອນ ໄວ້ໃນເຕັນຂອງພວກເຂົາ

56 ແຕ່ພວກເຂົາທັງຫລາຍຍັງທົດລອງ ແລະຍົວະ **ພຣະເຈົ້າ** ອົງສູງສຸດ
ໂດຍບໍ່ໄດ້ຮັກສາບັນດາພຣະໂອວາດຂອງພຣະອົງ
57 ກັບຫັນໜີໄປ ແລະປະພຶດເໝືອນຢ່າງບັນພະບູລຸດຂອງພວກເຂົາ
ພວກເຂົາບິດໄປເໝືອນຄັນທະນູທີ່ໄວ້ໃຈບໍ່ໄດ້
58 ເພາະພວກເຂົາຍົວະຍົງພຣະອົງໃຫ້ໂກດຮ້າຍ
ດ້ວຍເລື່ອງປູຊະນີຍະສະຖານສູງຂອງພວກເຂົາທັງຫລາຍ
ໄດ້ຍົວະໃຫ້ພຣະອົງຫຶງຫວງພວກເຂົາ
ດ້ວຍເລື່ອງຮູບເຄົາລົບແກະສະຫລັກຂອງພວກເຂົາ
59 ເມື່ອ **ພຣະເຈົ້າ** ຮັບຟັງ ພຣະອົງພຣະພິໂລດ
ແລະຊິງກຽດຊັງ ອິສຣາເອນ ຢ່າງໜັກ
60 ພຣະອົງປະຖິ້ມເຕັນໃນຊີໂລ ຄືເຕັນທີ່ພຣະອົງຕັ້ງໄວ້ທ່າມກາງມະນຸດ
61 ແລະມອບລິດທານຸພາບຂອງພຣະອົງແກ່ການເປັນຊະເລີຍ
ແລະສະຫງ່າລາສີຂອງພຣະອົງແກ່ມືຂອງສັດຕູ
62 ພຣະອົງມອບປະຊາຊົນຂອງພຣະອົງແກ່ດາບ
ແລະພຣະພິໂລດຕໍ່ມໍລະດົກຂອງພຣະອົງ
63 ໄຟເຜົາຜານຊາຍໜຸ່ມຂອງພວກເຂົາ

ແລະຍິງສາວຂອງພວກເຂົາກໍບໍ່ໄດ້ແຕ່ງງານ
64 ບັນດາປະໂລຫິດຂອງພວກເຂົາລົ້ມລົງດ້ວຍດາບ
ແລະແມ່ໝ້າຍຂອງພວກເຂົາບໍ່ມີການຮ້ອງທຸກ

65 ແລ້ວອົງພຣະຜູ້ເປັນເຈົ້າຊົງຕື່ນຈາກບັນທົມ
ເໝືອນຢ່າງຊາຍໜຸ່ມໂຫ່ຮ້ອງ ເພາະລິດເຫລົ້າອະງຸ່ນ
66 ແລະພຣະອົງຕີສັດຕູຂອງພຣະອົງໃນຂ້າງຫລັງ
ແລະໃຫ້ພວກເຂົາໄດ້ອັບອາຍເປັນນິດ
67 ພຣະອົງປະຕິເສດຫໍເຕັນຂອງໂຢເຊັບພຣະອົງບໍ່ໄດ້ເລືອກຕະກູນເອຟຣາຢິມ
68 ແຕ່ພຣະອົງເລືອກຕະກູນຢູດາພູເຂົາຊີໂອນຊຶ່ງພຣະອົງຮັກ
69 ພຣະອົງສ້າງສະຖານທີ່ບໍລິສຸດຂອງພຣະອົງເໝືອນກັບລາຊະວັງສູງ
ເໝືອນກັບແຜ່ນດິນໂລກຊຶ່ງພຣະອົງຕັ້ງໄວ້ເປັນນິດ
70 ພຣະອົງເລືອກດາວິດຜູ້ຮັບໃຊ້ຂອງພຣະອົງ ພາເພິ່ນມາຈາກຄອກແກະ
71 ພຣະອົງພາເພິ່ນມາຈາກການເບິ່ງແຍງແມ່ແກະທີ່ມີລູກອ່ອນ
ໃຫ້ເປັນຜູ້ລ້ຽງດູຢາໂຄບປະຊາຊົນຂອງພຣະອົງ
ແລະອິສຣາເອນມໍລະດົກຂອງພຣະອົງເໝືອນຢ່າງລ້ຽງແກະ
72 ເພິ່ນຈຶ່ງລ້ຽງດູພວກເຂົາທັງຫລາຍດ້ວຍໃຈທ່ຽງທຳ
ແລະນຳພວກເຂົາທັງຫລາຍໄປດ້ວຍມືທີ່ຊຳນານ

# ບົດທີ 79

## ການຮ້ອງທຸກ ເລື່ອງການທຳລາຍກຸງເຢຣູຊາເລັມ

*ເພງສັນລະເສີນຂອງອາຊັບ*

1 ຂ້າແດ່ພຣະເຈົ້າພວກຕ່າງຊາດໄດ້ເຂົ້າໄປໃນມໍລະດົກຂອງພຣະອົງ
ພວກເຂົາໄດ້ເຮັດໃຫ້ພຣະວິຫານບໍລິສຸດຂອງພຣະອົງມີມົນທິນ
ໄດ້ເຮັດໃຫ້ເຢຣູຊາເລັມເປັນທີ່ເພພັງ
2 ພວກເຂົາໃຫ້ສົບຜູ້ຮັບໃຊ້ຂອງພຣະອົງເປັນອາຫານແກ່ບັນດານົກໃນອາກາດ
ໃຫ້ເນື້ອໜັງຂອງຜູ້ບໍລິສຸດຂອງພຣະອົງແກ່ສັດປ່າແຫ່ງແຜ່ນດິນໂລກ
3 ພວກເຂົາໄດ້ຖອກເລືອດຂອງຄົນເຫລົ່ານັ້ນອອກມາເໝືອນກັບນໍ້າຮອບເຢຣູຊາເລັມ
ຈົນບໍ່ມີຄົນຝັງສົບ
4 ເຮົາກາຍເປັນທີ່ຫຍໍ້ຫຍັນແກ່ເພື່ອນບ້ານຂອງເຮົາ
ເປັນທີ່ໝິ່ນປະໝາດ ແລະເຍາະເຍີ້ຍແກ່ຄົນທີ່ຢູ່ຮອບເຮົາ
5 ຂ້າແດ່ພຣະຜູ້ເປັນເຈົ້າພຣະອົງໂກດຮ້າຍອີກດົນເທົ່າໃດ
ຕະຫລອດໄປເປັນນິດຫລືພຣະເຈົ້າຂ້າ
ຄວາມຫວງແຫນຂອງພຣະອົງຈະໄໝ້ດັ່ງໄຟໄປອີກດົນເທົ່າໃດ

6 ຂໍຖອກຄວາມໂກດຮ້າຍຂອງພຣະອົງລົງເໜືອບັນດາປະຊາຊາດ
ທີ່ບໍ່ຮູ້ຈັກພຣະອົງ ແລະເໜືອລາຊະອານາຈັກທັງຫລາຍ
ທີ່ບໍ່ຮ້ອງທູນອອກພຣະນາມຂອງພຣະອົງ
7 ເພາະພວກເຂົາທັງຫລາຍໄດ້ຜານຢາໂຄບ ແລະເຮັດໃຫ້ທີ່ອາໄສຂອງລາວຮ້າງ

## ການທູນຂໍພຣະເຈົ້າຊ່ວຍພວກເຂົາໃຫ້ພົ້ນ

8 ຂໍຢ່າລະນຶກເຖິງຄວາມຊົ່ວຊ້າຂອງບັນພະບູລຸດຂອງຂ້ານ້ອຍທັງຫລາຍ
ຂໍພຣະເມດຕາຂອງພຣະອົງເລັ່ງມາພົບຂ້ານ້ອຍທັງຫລາຍ
ເພາະຂ້ານ້ອຍທັງຫລາຍຕົກຕໍ່າຫລາຍ

9 ຂ້າແດ່ພຣະເຈົ້າ ແຫ່ງຄວາມພົ້ນຂອງຂ້ານ້ອຍທັງຫລາຍ ຂໍຊ່ວຍຂ້ານ້ອຍ
ເພາະເຫັນແກ່ສະຫງ່າລາສີແຫ່ງພຣະນາມຂອງພຣະອົງ
ຂໍຊ່ວຍຂ້ານ້ອຍໃຫ້ພົ້ນ ແລະອະໄພບາບຂອງຂ້ານ້ອຍ
ເພາະເຫັນແກ່ພຣະນາມຂອງພຣະອົງ
10 ຄວນຫລືທີ່ບັນດາປະຊາຊາດຈະກ່າວວ່າ "ພຣະເຈົ້າຂອງພວກເຂົາຢູ່ທີ່ໃດ"
ຂໍໃຫ້ພຣະອົງປະກົດໃນທ່າມກາງປະຊາຊາດ
ຕໍ່ສາຍຕາຂອງຂ້ານ້ອຍທັງຫລາຍ
ໂດຍການແກ້ແຄ້ນເລືອດຂອງຜູ້ຮັບໃຊ້ພຣະອົງທີ່ໄຫລອອກມາ
11 ຂໍໃຫ້ສຽງຮ້ອງຂອງບັນດາຊະເລີຍມາຢູ່ຕໍ່ພຣະພັກພຣະອົງ
ດ້ວຍລິດທານຸພາບອັນຍິ່ງໃຫຍ່ຂອງພຣະອົງ
ຂໍໄວ້ຊີວິດຄົນເຫລົ່ານັ້ນທີ່ຕ້ອງເຖິງຕາຍ

12 ຂ້າແດ່ອົງພຣະຜູ້ເປັນເຈົ້າ ຂໍຕອບແທນການທີ່ພວກເຂົາໄດ້ເຍາະເຍີ້ຍຕໍ່ພຣະອົງ
ຈັກເຈັດເທົ່າ ໃນຜົ້ງເອິກເພື່ອນບ້ານຂອງຂ້ານ້ອຍ
13 ແລ້ວຂ້ານ້ອຍທັງຫລາຍ ປະຊາຊົນຂອງພຣະອົງ
ຝູງແບ້ແກະແຫ່ງທົ່ງຫຍ້າຂອງພຣະອົງ
ຈະໂມທະນາພຣະຄຸນພຣະອົງເປັນນິດ
ຂ້ານ້ອຍທັງຫລາຍຈະກ່າວສັນລະເສີນພຣະອົງຕະຫລອດທຸກຊົ່ວອາຍຸ

# ບົດທີ 80

## ການອ້ອນວອນສຳລັບສ້າງຊົນຊາດຂຶ້ນໃໝ່

1 ພຣະຜູ້ເປັນເຈົ້າ ເປັນຜູ້ລ້ຽງແກະຂອງພວກອິສຣາເອນ ຂໍຊົງຟັງພວກຂ້ານ້ອຍເທີ້ນ
ພຣະອົງຊົງນຳພາຝູງແກະ ຂໍຊົງຟັງສຽງພວກຂ້ານ້ອຍ
ພຣະຜູ້ຊົງປະທັບເທິງພຣະທີ່ນັ່ງ ເໜືອນເທວະດາເຄຣຸບ.
2 ຂໍຊົງເຜີຍຄວາມຮັກຂອງພຣະອົງແກ່ພວກເອຟຣາຢິມ

ພວກ ເບັນຢາມິນ ແລະພວກ ມານາເຊ
ຂໍຊົງສະແດງໃຫ້ພວກຂ້ານ້ອຍເຫັນລິດເດຊານຸພາບຂອງພຣະອົງ
ແລະສະເດັດມາຊ່ອຍພວກຂ້ານ້ອຍໃຫ້ພົ້ນໄພດ້ວຍ.
3 ພຣະເຈົ້າຂ້າ ຂໍພຣະອົງຊົງນຳພວກຂ້ານ້ອຍກັບຄືນມາ
ຂໍຊົງສະແດງຄວາມຮັກແກ່ພວກຂ້ານ້ອຍ ແລະພວກຂ້ານ້ອຍຈະພົ້ນໄພ.

4 ຂ້າແດ່ ພຣະຜູ້ເປັນເຈົ້າ ແຫ່ງຈັກກະວານ ພຣະອົງຍັງຈະຄຽດແຄ້ນ
ຕໍ່ຄຳອ້ອນວອນຂອງໄພ່ພົນຂອງພຣະອົງຢູ່ອີກດົນປານໃດ?
5 ພຣະອົງຊົງເຮັດໃຫ້ພວກຂ້ານ້ອຍກິນເຂົ້າກັບນໍ້າຕາ
ແລະຊົງເຮັດໃຫ້ພວກຂ້ານ້ອຍຮ້ອງໄຫ້ຕະຫລອດເວລາ.
6 ພຣະອົງຊົງປ່ອຍໃຫ້ຊົນຊາດເພື່ອນບ້ານ
ມາຮຸກຮານຜືນແຜ່ນດິນຂອງພວກຂ້ານ້ອຍ
ແລະສັດຕູກໍຫົວຂວັນພວກຂ້ານ້ອຍ.
7 ພຣະຜູ້ເປັນເຈົ້າ ແຫ່ງຈັກກະວານ ກໍຊົງນຳພວກຂ້ານ້ອຍກັບຄືນມາ
ຂໍຊົງສະແດງຄວາມຮັກແກ່ພວກຂ້ານ້ອຍ ແລະພວກຂ້ານ້ອຍຈະພົ້ນໄພ.

8 ພຣະອົງຊົງເອົາເບ້ຍອະງຸ່ນອອກມາຈາກປະເທດ ເອຢິບ
ແລະຊົງຂັບໄລ່ຊົນຊາດອື່ນໆອອກ ແລ້ວເອົາເບ້ຍອະງຸ່ນນັ້ນປູກໄວ້
ໃນແຜ່ນດິນຂອງພຣະອົງ.
9 ພຣະອົງຊົງຖາກຖາງດິນປູກຝັງ ເພື່ອໃຫ້ເບ້ຍມັນປົ່ງຂຶ້ນ
ຮາກຂອງມັນຢັ່ງລົງເລິກ ແລະແຜ່ຜາຍອອກໄປທົ່ວທັງປະເທດ.
10 ມັນປົກງຳໜ່ວຍພູທັງຫລາຍ
ແລະເຄືອຂອງມັນປົກງຳຕົ້ນສົນທີ່ສູງສຸດ.
11 ມັນໄດ້ແຜ່ລາມອອກໄປຈົນເຖິງທະເລ ເມດີແຕຣາເນ
ແລະຮອດແມ່ນໍ້າ ເອຟຣາດ.

12 ເປັນຫຍັງພຣະອົງຈຶ່ງຊົງທຳລາຍຮົ້ວທີ່ອ້ອມຮອບມັນນັ້ນ?
ແລະດຽວນີ້ ເມື່ອທຸກຄົນຍ່າງຜ່ານໄປກໍລັກເອົາໝາກຂອງມັນ.
13 ສ່ວນໝູປ່າໄດ້ມາຢຽບຢໍ່າມັນ
ແລະສັດປ່າກໍມາກິນມັນ.
14 ຂ້າແດ່ ພຣະຜູ້ເປັນເຈົ້າ ແຫ່ງຈັກກະວານ
ຂໍພຣະອົງຊົງກັບຄືນມາຫາພວກຂ້ານ້ອຍ
ຂໍຊົງຫລຽວແລພວກຂ້ານ້ອຍແຕ່ສະຫວັນຊັ້ນຟ້າ
ແລະມາຊ່ອຍເບ້ຍອະງຸ່ນຂອງພຣະອົງໃຫ້ພົ້ນໄພເທີ້ນ.
15 ຂໍພຣະອົງຊົງສະເດັດມາຮັກສາຕົ້ນອະງຸ່ນທີ່ພຣະອົງປູກໄວ້ນັ້ນໃຫ້ພົ້ນໄພ

ຄືເບັຍອະງຸ່ນ ຊຶ່ງພຣະອົງໄດ້ຊົງເຮັດໃຫ້ມັນໃຫຍ່ຂຶ້ນມາແລ້ວ.
16 ສັດຕູຂອງພວກຂ້ານ້ອຍໄດ້ຕັດມັນລົງ ແລະຈູດຖິ້ມ
ຂໍພຣະອົງຊົງທຳລາຍພວກເຂົາດ້ວຍຄວາມຄຽດຮ້າຍ.
17 ຂໍພຣະອົງຊົງຄຸ້ມຄອງຮັກສາຄົນທີ່ພຣະອົງຊົງເລືອກໄວ້
ຄືຜູ້ທີ່ພຣະອົງຊົງເຮັດໃຫ້ແຂງແຮງຂຶ້ນ.
18 ພວກຂ້ານ້ອຍຈະບໍ່ໜີໜ້າຈາກພຣະອົງອີກ
ຂໍຊົງໂຜດໃຫ້ພວກຂ້ານ້ອຍມີຊີວິດ
ແລະພວກຂ້ານ້ອຍຈະສັນລະເສີນພຣະອົງ.
19 ຂ້າແດ່ພຣະຜູ້ເປັນເຈົ້າພຣະເຈົ້າແຫ່ງຈັກກະວານ
ຂໍຊົງນຳພວກຂ້ານ້ອຍກັບຄືນມາ
ຂໍສະແດງຄວາມຮັກແກ່ພວກຂ້ານ້ອຍ
ແລະພວກຂ້ານ້ອຍຈະພົ້ນໄພ.

# ບົດທີ 81

## ການສັນລະເສີນພຣະເຈົ້າ ເຖິງຫົວໜ້ານັກຮ້ອງ ທຳນອງກິດຕິດ

*ເພງສັນລະເສີນຂອງອາຊັບ*

1 ຈົ່ງຮ້ອງເພງຖວາຍພຣະເຈົ້າພຣະກຳລັງຂອງພວກເຮົາ
ຈົ່ງຮ້ອງເພງດ້ວຍສຽງດັງຖວາຍແດ່ພຣະເຈົ້າຂອງຢາໂຄບ
2 ຈົ່ງເປັ່ງສຽງສັນລະເສີນ ຈົ່ງຕີກອງທັງພິນຄູ່ອັນມ່ວນ ແລະພິນໃຫຍ່
3 ຈົ່ງເປົ່າແກເມື່ອເດືອນອອກໃໝ່ ເມື່ອເດືອນເພັງ ວັນງານກິນລ້ຽງຂອງເຮົາ
4 ເພາະເປັນກົດເກນສຳລັບອິສຣາເອນ
ເປັນກົດໝາຍຂອງພຣະເຈົ້າແຫ່ງຢາໂຄບ
5 ພຣະອົງຕັ້ງໃຫ້ເປັນພຣະໂອວາດໃນໂຢເຊັບ
ເມື່ອພຣະອົງອອກໄປສູ່ແຜ່ນດິນເອຢິບ

ໃນບ່ອນທີ່ຂ້ານ້ອຍໄດ້ຍິນພາສາ ຊຶ່ງຂ້ານ້ອຍບໍ່ເຄີຍຮູ້ຈັກ

6 ວ່າ “ເຮົາໄດ້ຍົກຂອງໜັກອອກຈາກບ່າຂອງລາວຈາກພາລະຂອງລາວ
ມືລາວເປັນອິດສະຫລະພົ້ນພາຖາດ
7 ເມື່ອທຸກໃຈເຈົ້າເອີ້ນ ເຮົາກໍຊ່ວຍເຈົ້າໃຫ້ພົ້ນ
ເຮົາຕອບເຈົ້າໃນທີ່ລັບລີ້ຂອງຟ້າຮ້ອງ ເຮົາໄດ້ທົດລອງເຈົ້າທີ່ນ້ຳເມຣິບາ

*ເຊລາ*

8 ໂອ ປະຊາຊົນຂອງເຮົາເອີຍ ຈົ່ງຟັງ ແລ້ວເຮົາຈະທັກທ້ວງເຈົ້າ
ໂອອິສຣາເອນເອີຍ ຖ້າເຈົ້າຈະຟັງເຮົາ
9 ຈະບໍ່ມີພະແປກໆທ່າມກາງເຈົ້າເລີຍ ເຈົ້າຈະບໍ່ຂາບໄຫວ້ພະຕ່າງດ້າວ

10 ເຮົາຄືພຣະຜູ້ເປັນເຈົ້າພຣະເຈົ້າຂອງເຈົ້າ
ຜູ້ໄດ້ພາເຈົ້າອອກມາຈາກແຜ່ນດິນເອຢິບ
ອ້າປາກຂອງເຈົ້າໃຫ້ກວ້າງສາ ເຮົາຈະປ້ອນເຈົ້າໃຫ້ອີ່ມ

11 ແຕ່ປະຊາຊົນຂອງເຮົາບໍ່ຟັງສຽງຂອງເຮົາອິສຣາເອນບໍ່ຍອມຮັບເຮົາເລີຍ
12 ເຮົາຈຶ່ງມອບພວກເຂົາໄວ້ແກ່ຈິດໃຈທີ່ດື້ດ້ານຂອງພວກເຂົາເອງ
ໃຫ້ເປັນໄປຕາມຄຳປຶກສາຂອງພວກເຂົາເອງ
13 ເອີ ປະຊາຊົນຂອງເຮົາ ຄວນຈະຟັງເຮົາ
ແລະອິສຣາເອນຄວນຈະຍ່າງໃນທາງທັງຫລາຍຂອງເຮົາ
14 ແລ້ວບໍ່ຊ້າ ເຮົາກໍຈະໃຫ້ສັດຕູຂອງພວກເຂົານອບນ້ອມລົງ
ແລະຈະຫັນມືຂອງເຮົາຕໍ່ສູ້ສັດຕູຂອງພວກເຂົາ”
15 ບັນດາຜູ້ທີ່ກຽດຊັງພຣະຜູ້ເປັນເຈົ້າຈະກົ້ມກາບຕໍ່ພຣະອົງ
“ແຕ່ເວລາຂອງພວກເຂົາທັງຫລາຍຈະຍືນຍົງຢູ່ເປັນນິດ”
16 ພຣະອົງຈະລ້ຽງພວກເຂົາດ້ວຍເຂົ້າສາລີຢ່າງດີທີ່ສຸດ
“ເຮົາຈະໃຫ້ເຈົ້າພໍໃຈດ້ວຍນໍ້າເຜີ້ງທີ່ມາຈາກຫີນ”

# ບົດທີ 82

## ການທູນຂໍໃຫ້ພຣະເຈົ້າພິພາກສາ

*ເພງສັນລະເສີນຂອງອາຊັບ*

1 ພຣະເຈົ້າເຂົ້າປະທັບໃນຊຸມນຸມຊົນຂອງຜູ້ທີ່ມີອຳນາດ
ພຣະອົງເຮັດການພິພາກສາທ່າມກາງພະທັງຫລາຍວ່າ
2 “ທ່ານຈະຕັດສິນຢ່າງບໍ່ຍຸດຕິທຳ
ແລະສະແດງຄວາມລຳອຽງເຂົ້າຂ້າງຄົນຊົ່ວດົນເທົ່າໃດ

*ເຊລາ*

3 ຈົ່ງໃຫ້ຄວາມຍຸດຕິທຳແກ່ຄົນຍາກຈົນ ແລະເດັກກຳພ້າພໍ່
ຈົ່ງຮັກສາສິດທິຂອງຜູ້ທີ່ທຸກຍາກ ແລະຄົນຂັດສົນ
4 ຈົ່ງຊ່ວຍຄົນຍາກຈົນ ແລະຄົນຂັດສົນໃຫ້ພົ້ນ
ຊ່ວຍພວກເຂົາໃຫ້ພົ້ນຈາກມືຂອງຄົນຊົ່ວ”

5 ພວກເຂົາທັງຫລາຍບໍ່ຮູ້ ແລະບໍ່ເຂົ້າໃຈ ພວກເຂົາຍ່າງໄປມາໃນຄວາມມືດ
ຮາກທັງໝົດຂອງແຜ່ນດິນໂລກກໍຫວັ່ນໄຫວ

6 ເຮົາໄດ້ກ່າວວ່າ “ທ່ານທັງຫລາຍເປັນພະ ເປັນບຸດອົງຜູ້ສູງສຸດ
ທ່ານທຸກຄົນນັ້ນແຫລະ
7 ເຖິງປານນັ້ນ ທ່ານກໍຈະຕາຍຢ່າງມະນຸດ

ແລະລົ້ມລົງເໝືອນເຈົ້ານາຍຄົນໜຶ່ງຄົນໃດ"

8 ຂ້າແດ່ພຣະເຈົ້າ ຂໍລຸກຂຶ້ນພິພາກສາແຜ່ນດິນໂລກ
ເພາະບັນດາປະຊາຊາດທັງໝົດຈະເປັນມໍລະດົກຂອງພຣະອົງ

# ບົດທີ 83

## ການຮ້ອງທຸກ ເລື່ອງການຄິດກະບົດ

*ບົດເພງ ຫລືເພງສັນລະເສີນຂອງອາຊັບ*

1 ຂ້າແດ່ພຣະເຈົ້າ ຂໍຢ່ານິດຢູ່ ຂ້າແດ່ພຣະເຈົ້າ ຂໍຢ່າງຽບ ແລະເສີຍຢູ່

2 ເພາະເບິ່ງແມ ສັດຕູຂອງພຣະອົງຊຸັບສົນວຸ້ນວາຍ
ບັນດາຜູ້ທີ່ຊັງພຣະອົງໄດ້ຍົກຫົວຂອງພວກເຂົາຂຶ້ນ
3 ພວກເຂົາວາງແຜນອຸບາຍຕໍ່ສູ້ປະຊາຊົນຂອງພຣະອົງ
ພວກເຂົາປຶກສາກັນຕໍ່ສູ້ຜູ້ທີ່ພຣະອົງເຊື່ອງຢູ່
4 ພວກເຂົາເວົ້າວ່າ "ມາແມ ໃຫ້ເຮົາຕັດພວກເຂົາອອກຈາກການເປັນປະຊາຊາດ
ເພື່ອຈະບໍ່ລະນຶກເຖິງຊື່ອິສຣາເອນອີກຕໍ່ໄປ"
5 ເພາະພວກເຂົາປອງຮ້າຍເປັນໃຈດຽວກັນ ພວກເຂົາເຮັດຄຳໝັ້ນສັນຍາຕໍ່ສູ້ພຣະອົງ
6 ຄື ເຕັນຂອງ ເອໂດມ ແລະຄົນ ອິດຊະມາເອນ ໂມອາບ ແລະຄົນ ຮາກາ
7 ເກບານ ອຳໂມນ ແລະອຳອາເລັກຟີລິດສະຕິນກັບຊາວເມືອງ ຕີເຣ
8 ອັດຊີເຣຍກໍສົມທົບພວກເຂົາດ້ວຍ ພວກເຂົາໄດ້ຊ່ວຍລູກຫລານຂອງ ໂລດ

*ເຊລາ*

## ຄຳອະທິຖານຕໍ່ສູ້ສັດຕູຂອງອິສຣາເອນ

9 ຂໍເຮັດກັບພວກເຂົາເໝືອນຢ່າງພຣະອົງຊົງເຮັດກັບ ມີດີອານ
ເໝືອນຢ່າງທີ່ເຮັດກັບ ສິເສຣາ ແລະ ຢາບິນ ທີ່ແມ່ນໍ້າ ກີໂຊນ
10 ຜູ້ຖືກທຳລາຍທີ່ ເອັນ-ໂດເຣ ຜູ້ກາຍເປັນປຸຍຂອງດິນ
11 ຂໍຊົງເຮັດຂ້າລາຊະການຂອງພວກເຂົາເປັນເໝືອນ ໂອເຣັບ ແລະ ເຊເອບ
ເຮັດໃຫ້ເຈົ້ານາຍທັງໝົດຂອງພວກເຂົາເປັນເໝືອນ ເຊບາ ແລະ ຊັນມຸນນາ
12 ຜູ້ທີ່ກ່າວວ່າ "ໃຫ້ເຮົາເອົາທີ່ອາໄສທັງຫລາຍຂອງ ພຣະເຈົ້າ
ມາເປັນກຳມະສິດຂອງເຮົາເຖີດ"

13 ຂ້າແດ່ພຣະເຈົ້າ ຂອງຂ້ານ້ອຍ ຂໍເຮັດພວກເຂົາໃຫ້ເປັນເໝືອນກົງຈັກ
ເໝືອນແກບຕໍ່ໜ້າລົມ
14 ເໝືອນຢ່າງໄຟເຜົາຜານປ່າໄມ້ ເໝືອນຢ່າງແປວໄຟທີ່ເຮັດໃຫ້ພູເຂົາລຸກໄໝ້
15 ຂໍຂົ່ມເຫັງພວກເຂົາດ້ວຍພະຍຸແຮງກ້າຂອງພຣະອົງ
ແລະເຮັດໃຫ້ພວກເຂົາຢ້ານຢຳເກງດ້ວຍພະຍຸຮ້າຍຂອງພຣະອົງ

16 ໃຫ້ໜ້າຂອງພວກເຂົາເຕັມໄປດ້ວຍຄວາມອັບອາຍ ຂ້າແດ່ພຣະຜູ້ເປັນເຈົ້າ
ເພື່ອພວກເຂົາຈະໄດ້ສະແຫວງຫາພຣະນາມຂອງພຣະອົງ
17 ຂໍໃຫ້ພວກເຂົາອັບອາຍ ແລະຢ້ານຢູ່ເປັນນິດ ໃຫ້ພວກເຂົາສັບສົນ ແລະຈິບຫາຍໄປ
18 ເພື່ອຄົນທັງປວງຈະຮູ້ວ່າພຣະອົງ ຜູ້ພຣະນາມວ່າພຣະຜູ້ເປັນເຈົ້າ ແຕ່ຜູ້ດຽວ
ເປັນຜູ້ສູງສຸດເໜືອແຜ່ນດິນໂລກທັງໝົດ

# ບົດທີ 84

## ຢາກຢູ່ໃນພຣະວິຫານຂອງພຣະເຈົ້າ

1 ຂ້າແດ່ພຣະຜູ້ເປັນເຈົ້າ ແຫ່ງຈັກກະວານ
ຂ້ານ້ອຍຮັກ ແລະຢາກຢູ່ໃນພຣະວິຫານຂອງພຣະອົງອີ່ຫລີ.
2 ຂ້ານ້ອຍຢູ່ໃນບໍລິເວນພຣະວິຫານຂອງພຣະອົງ
ໂອພຣະຜູ້ເປັນເຈົ້າຜູ້ຊົງພຣະຊົນຢູ່
ຂ້ານ້ອຍຮ້ອງເພງຢ່າງມ່ວນຊື່ນດ້ວຍໝົດຈິດໝົດໃຈ.

3 ຂ້າແດ່ພຣະຜູ້ເປັນເຈົ້າ ແຫ່ງຈັກກະວານ ຜູ້ຊົງເປັນເຈົ້າຊີວິດ
ແລະພຣະເຈົ້າຂອງຂ້ານ້ອຍ
ນົກຈອກ ແລະນົກແອ່ນກໍຍັງມີຮັງຢູ່
ພວກມັນຮັກສາລູກນ້ອຍຂອງມັນໄວ້ໃກ້ແທ່ນບູຊາຂອງພຣະອົງ.
4 ຄວາມສຸກເປັນຂອງພວກທີ່ອາໄສຢູ່ໃນພຣະວິຫານຂອງພຣະອົງ
ຄືຜູ້ທີ່ຮ້ອງເພງສັນລະເສີນພຣະອົງຢູ່ບໍ່ຂາດ.

*ເຊລາ*

5 ຄວາມສຸກເປັນຂອງພວກທີ່ໄດ້ຮັບເຫື່ອແຮງມາຈາກພຣະອົງ
ແລະຢາກເດີນທາງໄປນະມັດສະການທີ່ພູຊີໂອນ.
6 ຂະນະທີ່ພວກເຂົາເດີນທາງຜ່ານໄປໃນຮ່ອມພູທີ່ແຫ້ງແລ້ງ
ບ່ອນນັ້ນກໍກາຍເປັນບ່ອນທີ່ບໍ່ມີນໍ້າ
ເມື່ອລະດູຝົນມາ ບ່ອນນັ້ນກໍເຕັມໄປດ້ວຍນໍ້າ.
7 ໃນຂະນະທີ່ພວກເຂົາຍ່າງໄປ ພວກເຂົາໄດ້ມີແຮງຂຶ້ນຫລາຍກວ່າເກົ່າ
ພວກເຂົາຈະເຫັນພຣະເຈົ້າຂອງພະທັງຫລາຍເທິງພູຊີໂອນ.
8 ຂ້າແດ່ພຣະຜູ້ເປັນເຈົ້າພຣະເຈົ້າ ແຫ່ງຈັກກະວານ
ຂໍຊົງຟັງສຽງອ້ອນວອນຂອງຂ້ານ້ອຍ
ພຣະເຈົ້າຂອງຢາໂຄບຂໍຊົງຟັງສຽງຂ້ານ້ອຍດ້ວຍ.

*ເຊລາ*

9 ພຣະເຈົ້າຂ້າ ຂໍຊົງອວຍພອນແກ່ເຈົ້າຊີວິດຂອງພວກຂ້ານ້ອຍ
ຜູ້ທີ່ພຣະອົງຊົງເລືອກໄວ້ແລ້ວ.

10 ຢູ່ໃນພຣະວິຫານຂອງພຣະອົງພຽງມື້ດຽວ
ກໍມີຄວາມສຸກກວ່າພັນມື້ໃນແຫ່ງອື່ນ
ຂ້ານ້ອຍຢາກຢືນຢູ່ໃກ້ປະຕູພຣະວິຫານຂອງ ພຣະເຈົ້າ
ຫລາຍກວ່າທີ່ຈະຢູ່ໃນເຮືອນຂອງຄົນຊົ່ວຮ້າຍ.
11 ພຣະຜູ້ເປັນເຈົ້າ ຊົງເປັນຜູ້ຄຸ້ມຄອງ ແລະເປັນ ພຣະເຈົ້າ ມະຫາຊີວິດ
ທີ່ຊົງສະຫງ່າລາສີຂອງພວກຂ້ານ້ອຍ
ຂໍຊົງອວຍພອນຂ້ານ້ອຍດ້ວຍພຣະເມດຕາ ແລະພຣະກຽດເທີ້ນ
ພຣະອົງບໍ່ໄດ້ປະຕິເສດທີ່ຈະໃຫ້ຂອງປະທານອັນດີ
ແກ່ຜູ້ທີ່ເຮັດຕາມທາງສິນທຳ.
12 ຂ້າແດ່ ພຣະຜູ້ເປັນເຈົ້າ ແຫ່ງຈັກກະວານ ຄວາມສຸກເປັນຂອງຜູ້ທີ່ເຊື່ອ
ໄວ້ວາງໃຈໃນພຣະອົງ.

# ບົດທີ 85

## ການອ້ອນວອນສຳລັບຄວາມດີຂອງຊົນຊາດອິສຣາເອນ

1 ຂ້າແດ່ ພຣະຜູ້ເປັນເຈົ້າ ພຣະອົງຊົງ ເມດຕາຜືນແຜ່ນດິນຂອງພຣະອົງ
ພຣະອົງຊົງ ເຮັດໃຫ້ພວກ ອິສຣາເອນ ຈະເລີນຂຶ້ນໃໝ່.
2 ພຣະອົງຊົງອະໄພບາບແກ່ໄພ່ພົນຂອງພຣະອົງ
ແລະຍົກໂທດໃນຄວາມຜິດທຸກຢ່າງຂອງພວກເຂົາເຈົ້າ.

*ເຊລາ*

3 ພຣະອົງຊົງ ເຊົາຄວາມຄຽດແຄ້ນ
ແລະບໍ່ຊົງພິໂລດພວກເຂົາຕໍ່ໄປອີກ.

4 ພຣະຜູ້ຊ່ອຍ ຂອງພວກຂ້ານ້ອຍ ຂໍພຣະອົງຊົງນຳພາພວກຂ້ານ້ອຍກັບຄືນເມືອ
ຂໍຊົງຄາຍຄວາມຄຽດແຄ້ນຈາກພວກຂ້ານ້ອຍ.
5 ພຣະອົງຊົງພິໂລດພວກຂ້ານ້ອຍຕະຫລອດໄປບໍ?
ພຣະພິໂລດຂອງພຣະອົງຈະບໍ່ສິ້ນສຸດລົງຈັກເທື່ອບໍ?
6 ຂໍພຣະອົງຊົງ ໃຫ້ພວກຂ້ານ້ອຍມີແຮງຂຶ້ນມາໃໝ່ອີກ
ແລະພວກຂ້ານ້ອຍທີ່ເປັນໄພ່ພົນຂອງພຣະອົງຈະສັນລະເສີນພຣະອົງ.
7 ຂ້າແດ່ ພຣະຜູ້ເປັນເຈົ້າ ຂໍພຣະອົງຊົງສະແດງຄວາມຮັກອັນໝັ້ນຄົງ
ຂອງພຣະອົງ ແກ່ພວກຂ້ານ້ອຍ
ແລະຊົງຊ່ອຍໃຫ້ຂ້ານ້ອຍພົ້ນໄພດ້ວຍ.

8 ຂ້ານ້ອຍກຳລັງຟັງສິ່ງທີ່ ພຣະເຈົ້າ ຈະກ່າວ
ພຣະອົງຊົງສັນຍາວ່າ ຖ້າພວກຂ້ານ້ອຍບໍ່ຫັນໄປເປັນຄົນໂງ່
ທີ່ເຮັດຜິດອີກ ພຣະອົງຈະຊົງປະທານສັນຕິສຸກແກ່ພວກຂ້ານ້ອຍ

ຊຶ່ງເປັນໄພ່ພົນຂອງພຣະອົງ.
9 ແນ່ນອນທີ່ສຸດ ພຣະອົງຊົງຕຽມພ້ອມເພື່ອຈະຊ່ອຍຜູ້ທີ່ຖວາຍກຽດ
ແດ່ພຣະອົງໃຫ້ພົ້ນໄພ
ແລະລັດສະໝີຂອງພຣະອົງຈະຄົງຢູ່ໃນແຜ່ນດິນຂອງພວກຂ້ານ້ອຍ.

10 ຄວາມຮັກ ແລະຄວາມສັດຊື່ສຸດຈະລິດຈະມາພ້ອມກັນ
ຄວາມຊອບທຳ ແລະຄວາມສະຫງົບສຸກຈະພົບພໍ້ກັນ.
11 ຄວາມສັດຊື່ສຸດຈະລິດຂອງມະນຸດຈະເກີດມີຂຶ້ນໃນແຜ່ນດິນນີ້
ແລະຄວາມຊອບທຳຂອງພຣະເຈົ້າຈາກສະຫວັນຊັ້ນຟ້າ
ຈະສອດສ່ອງລົງມາເຖິງພວກເຂົາ.
12 ພຣະຜູ້ເປັນເຈົ້າຈະຊົງເຮັດໃຫ້ພວກເຮົາຈະເລີນຂຶ້ນ
ແລະການເກັບກ່ຽວໃນແຜ່ນດິນຂອງພວກເຮົາ
ກໍເກີດດອກອອກຜົນໝັ້ນຄົງສົມບູນ.
13 ຄວາມຊອບທຳຈະມາກ່ອນພຣະຜູ້ເປັນເຈົ້າ
ເພື່ອຈັດຕຽມຫົນທາງສຳລັບພຣະອົງ.

# ບົດທີ 86

## ດາວິດເພິ່ງພຣະເມດຕາຂອງພຣະເຈົ້າ

*ຄຳອະທິຖານຂອງດາວິດ*

1 ຂ້າແດ່ພຣະຜູ້ເປັນເຈົ້າຂໍຫງ່ຽງພຣະກັນຮັບຟັງຂ້ານ້ອຍ
ເພາະຂ້ານ້ອຍຍາກຈົນ ແລະຂັດສົນ
2 ຂໍຮັກສາຊີວິດຂ້ານ້ອຍໄວ້ ເພາະຂ້ານ້ອຍບໍລິສຸດ
ຂ້າແດ່ພຣະເຈົ້າຂອງຂ້ານ້ອຍ
ຂໍຊ່ອຍຜູ້ຮັບໃຊ້ຂອງພຣະອົງຜູ້ວາງໃຈໃນພຣະອົງ
3 ຂ້າແດ່ອົງພຣະຜູ້ເປັນເຈົ້າຂໍພຣະກະລຸນາຕໍ່ຂ້ານ້ອຍ
ເພາະຂ້ານ້ອຍຮ້ອງທູນຕໍ່ພຣະອົງແຕ່ເຊົ້າຮອດຄ່ຳ
4 ຂໍໃຫ້ຈິດໃຈຜູ້ຮັບໃຊ້ຂອງພຣະອົງຍິນດີ ຂ້າແດ່ອົງພຣະຜູ້ເປັນເຈົ້າ
ຈິດໃຈຂ້ານ້ອຍຕັ້ງໃຈແນ່ແທ້ໃນພຣະອົງ

5 ຂ້າແດ່ອົງພຣະຜູ້ເປັນເຈົ້າເພາະພຣະອົງປະເສີດ
ແລະພ້ອມທີ່ຈະປະທານການອະໄພ
ຊົງອຸດົມສົມບູນໄປດ້ວຍຄວາມເມດຕາຕໍ່ບັນດາຜູ້ຮ້ອງທູນພຣະອົງ
6 ຂ້າແດ່ພຣະຜູ້ເປັນເຈົ້າຂໍຫງ່ຽງພຣະກັນຮັບຟັງຄຳທູນອະທິຖານຂອງຂ້ານ້ອຍ
ຂໍຮັບຟັງສຽງຮ້ອງທູນອ້ອນວອນຂອງຂ້ານ້ອຍ
7 ໃນມື້ລຳບາກຂອງຂ້ານ້ອຍ ຂ້ານ້ອຍຈະຮ້ອງທູນພຣະອົງ

ເພາະພຣະອົງຈະຕອບຂ້ານ້ອຍ

8 ຂ້າແດ່ອົງພຣະຜູ້ເປັນເຈົ້າ ໃນບັນດາພະ ບໍ່ມີຜູ້ໃດເໝືອນພຣະອົງ
ແລະບໍ່ມີກິດຈະການໃດໆເໝືອນກັບພຣະລາຊະກິດຂອງພຣະອົງ
9 ຂ້າແດ່ອົງພຣະຜູ້ເປັນເຈົ້າ
ບັນດາປະຊາຊາດທີ່ພຣະອົງສ້າງຈະມານະມັດສະການຕໍ່ພຣະພັກພຣະອົງ
ແລະຈະເທີດທູນພຣະນາມຂອງພຣະອົງ
10 ເພາະພຣະອົງຍິ່ງໃຫຍ່ ແລະກະທຳການອັດສະຈັນ
ພຣະອົງແຕ່ອົງດຽວເປັນພຣະເຈົ້າ

11 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍສອນເສັ້ນທາງຂອງພຣະອົງແກ່ຂ້ານ້ອຍ
ຂ້ານ້ອຍຈະດຳເນີນໃນຄວາມຈິງຂອງພຣະອົງ
ຂໍສຳຫລວດໃຈຂອງຂ້ານ້ອຍໃຫ້ຢຳເກງພຣະນາມຂອງພຣະອົງ
12 ຂ້າແດ່ອົງພຣະຜູ້ເປັນເຈົ້າ ພຣະເຈົ້າຂອງຂ້ານ້ອຍ
ຂ້ານ້ອຍຈະສັນລະເສີນພຣະອົງດ້ວຍສິ້ນສຸດໃຈ
ແລະຂ້ານ້ອຍຈະເທີດທູນພຣະນາມຂອງພຣະອົງເປັນນິດ
13 ເພາະຄວາມເມດຕາຂອງພຣະອົງທີ່ມີຕໍ່ຂ້ານ້ອຍນັ້ນຍິ່ງໃຫຍ່
ແລະພຣະອົງຊ່ວຍຈິດວິນຍານຂອງຂ້ານ້ອຍ
ໃຫ້ພົ້ນຈາກບ່ອນເລິກທີ່ສຸດຂອງນາລົກ

14 ຂ້າແດ່ພຣະເຈົ້າ ຄົນຈອງຫອງໄດ້ລຸກຂຶ້ນຕໍ່ສູ້ຂ້ານ້ອຍ
ໝູ່ຄົນໂຫດຮ້າຍຊອກຫາຊີວິດຂ້ານ້ອຍ ພວກເຂົາບໍ່ໄດ້ເອົາພຣະອົງໄວ້ຕໍ່ໜ້າພວກເຂົາ
15 ຂ້າແດ່ອົງພຣະຜູ້ເປັນເຈົ້າ ແຕ່ພຣະອົງເປັນພຣະເຈົ້າປະກອບດ້ວຍພຣະກະລຸນາ
ແລະພຣະເມດຕາ ຊົງໂກດຮ້າຍຊ້າ
ແລະອຸດົມສົມບູນໄປດ້ວຍຄວາມເມດຕາ ແລະຄວາມຈິງ
16 ຂໍຫັນມາເມດຕາຂ້ານ້ອຍ ຂໍປະທານກຳລັງແກ່ຜູ້ຮັບໃຊ້ຂອງພຣະອົງ
ແລະຂໍຊ່ວຍຊີວິດລູກຊາຍຂອງຍິງຄົນໃຊ້ຂອງພຣະອົງ
17 ຂໍປະທານໝາຍສຳຄັນແຫ່ງຄວາມຍິນດີຂອງພຣະອົງແກ່ຂ້ານ້ອຍ
ເພື່ອຄົນທີ່ກຽດຊັງຂ້ານ້ອຍຈະເຫັນ ແລະຈະໄດ້ຮັບຄວາມອັບອາຍ
ຂ້າແດ່ພຣະຜູ້ເປັນເຈົ້າ ເພາະພຣະອົງໄດ້ຊ່ວຍຂ້ານ້ອຍ
ແລະເລົ້າໂລມຂ້ານ້ອຍ

# ບົດທີ 87

## ສະຫງ່າລາສີຂອງອິສຣາເອນໃນອະນາຄົດ

*ເພງສັນລະເສີນ ຫລືບົດເພງຂອງຄະນະໂກຣາ*

1 ຮາກຖານຂອງພຣະອົງຢູ່ເທິງພູເຂົາອັນບໍລິສຸດ
2 ພຣະຜູ້ເປັນເຈົ້າຮັກປະຕູຊີໂອນຫລາຍຍິ່ງກວ່າບັນດາທີ່ຢູ່ອາໄສຂອງຢາໂຄບ
3 ໂອ ນະຄອນແຫ່ງພຣະເຈົ້າເອີຍ ພວກເຂົາກ່າວສັນລະເສີນນາງແລ້ວ

*ເຊລາ*

4 ໃນບັນດາຜູ້ທີ່ຮູ້ຈັກເຮົາ ເຮົາລະບຸຊື່ເອຢິບ ແລະບາບີໂລນ ເບິ່ງແມ
ຟີລິດສະຕິນ ຕີເຣ ແລະເອທີໂອເປຍພວກເຂົາກ່າວກັນວ່າ
"ຜູ້ນີ້ເກີດບ່ອນນັ້ນ"
5 ແລະພວກເຂົາຈະເວົ້າເລື່ອງຊີໂອນວ່າ "ຜູ້ນີ້ ແລະຜູ້ນັ້ນເກີດໃນເມືອງນັ້ນ"
ເພາະອົງຜູ້ສູງສຸດນັ້ນແຫລະ ຈະສະຖາປະນາເມືອງນັ້ນໄວ້
6 ຂະນະທີ່ພຣະຜູ້ເປັນເຈົ້າຊົງຈົດຊົນຊາດທັງຫລາຍ ພຣະອົງຈະບັນທຶກວ່າ
"ຜູ້ນີ້ເກີດບ່ອນນັ້ນ"

*ເຊລາ*

7 ນັກຮ້ອງ ແລະນັກຫລິ້ນເຄື່ອງດົນຕີຈະຢູ່ບ່ອນນັ້ນ
ນໍ້າພຸທັງໝົດຂອງເຮົາຢູ່ໃນນາງ

# ບົດທີ 88

## ຄຳອະທິຖານແຫ່ງຄວາມໂສກເສົ້າ

*ເພງສັນລະເສີນ ຫລືບົດເພງຂອງຄະນະໂກຣາ. ເຖິງຫົວໜ້ານັກຮ້ອງ*
*ຕາມທຳນອງມາຮາລາດ ເລອານໂນດ ມັດຄິນບົດໜຶ່ງຂອງເຮມານ ຄົນເອັດຊະຣາ.*

1 ຂ້າແດ່ພຣະຜູ້ເປັນເຈົ້າພຣະເຈົ້າແຫ່ງຄວາມພົ້ນຂອງຂ້ານ້ອຍ
ຂ້ານ້ອຍຮ້ອງທູນຕໍ່ພຣະພັກພຣະອົງທັງກາງເວັນ ແລະກາງຄືນ
2 ຂໍຄຳອະທິຖານຂອງຂ້ານ້ອຍມາຈຳເພາະເບື້ອງພຣະພັກຂອງພຣະອົງ
ຂໍຫງ່ຽງພຣະກັນຮັບຟັງຄຳຮ້ອງທູນຂອງຂ້ານ້ອຍ

3 ເພາະຈິດໃຈຂອງຂ້ານ້ອຍລຳບາກເຕັມທີ
ແລະຊີວິດຂອງຂ້ານ້ອຍເຂົ້າໃກ້ຄວາມຕາຍ
4 ພວກເຂົານັບຂ້ານ້ອຍໃນບັນດາຜູ້ທີ່ລົງໄປຍັງປາກແດນມໍລະນາ
ຂ້ານ້ອຍເປັນເໝືອນຊາຍທີ່ບໍ່ມີກຳລັງ
5 ເໝືອນຄົນທີ່ພວກເຂົາຖິ້ມໄວ້ທ່າມກາງຄົນຕາຍ
ເໝືອນຄົນຖືກຂ້າທີ່ຕຽງນອນຢູ່ໃນຂຸມສົບ ທີ່ພຣະອົງບໍ່ໄດ້ລະນຶກເຖິງອີກ
ເພາະພວກເຂົາທັງຫລາຍຖືກປະຖິ້ມຈາກພຣະຫັດຂອງພຣະອົງ

6 ພຣະອົງໃສ່ຂ້ານ້ອຍໄວ້ໃນສ່ວນເລິກຂອງປາກຄວາມຕາຍ
ໃນແດນທີ່ມືດ ແລະເລິກ
7 ພຣະພິໂລດຂອງພຣະອົງໜັກຢູ່ເທິງຂ້ານ້ອຍ
ແລະພຣະອົງທັບຖົມຂ້ານ້ອຍດ້ວຍຄື້ນທັງໝົດຂອງພຣະອົງ

*ເຊລາ*

8 ພຣະອົງໃຫ້ຜູ້ທີ່ຄຸ້ນເຄີຍກັບຂ້ານ້ອຍເຫີນຫ່າງຈາກຂ້ານ້ອຍ
ພຣະອົງເຮັດໃຫ້ຂ້ານ້ອຍເປັນທີ່ໜ້າລັງກຽດຂອງພວກເຂົາທັງຫລາຍ
ຂ້ານ້ອຍຖືກຂັງ ຂ້ານ້ອຍຈຶ່ງອອກໄປບໍ່ໄດ້
9 ໃນຕາຂອງຂ້ານ້ອຍມົວໄປເພາະຄວາມທຸກ ຂ້າແດ່ພຣະຜູ້ເປັນເຈົ້າ
ຂ້ານ້ອຍຮ້ອງທູນພຣະອົງທຸກມື້ ຂ້ານ້ອຍຊູມືຂຶ້ນຕໍ່ພຣະອົງ
10 ພຣະອົງຈະກະທຳການອັດສະຈັນເພື່ອຄົນຕາຍຫລື
ຊາວແດນມໍລະນາຈະລຸກຂຶ້ນສັນລະເສີນພຣະອົງໄດ້ຫລື

*ເຊລາ*

11 ພວກເຂົາຈະປະກາດຄວາມເມດຕາຂອງພຣະອົງໃນຂຸມສົບຫລື
ຫລືຈະປະກາດຄວາມສັດຊື່ໃນແດນມໍລະນາຫລື
12 ໃນຄວາມມືດ ພວກເຂົາຈະຮູ້ຈັກການອັດສະຈັນຂອງພຣະອົງຫລື
ໃນແຜ່ນດິນແຫ່ງຄວາມຫລົງລືມພວກເຂົາ
ຈະຮູ້ຈັກຄວາມຊອບທຳຂອງພຣະອົງຫລື

13 ຂ້າແດ່ພຣະຜູ້ເປັນເຈົ້າ ແຕ່ຂ້ານ້ອຍຮ້ອງທູນຕໍ່ພຣະອົງ
ໃນເວລາເຊົ້າຄຳອະທິຖານຂອງຂ້ານ້ອຍຈະຂຶ້ນໄປຫາພຣະອົງ
14 ຂ້າແດ່ພຣະຜູ້ເປັນເຈົ້າ ເຫດໃດພຣະອົງຈຶ່ງຊົງປະຖິ້ມຈິດວິນຍານຂ້ານ້ອຍອອກໄປ
ເຫດໃດພຣະອົງເຊື່ອງພຣະພັກຈາກຂ້ານ້ອຍ
15 ຕັ້ງແຕ່ເປັນເດັກນ້ອຍມາ ຂ້ານ້ອຍທຸກຍາກ ແລະພ້ອມທີ່ຈະຕາຍ
ຂະນະຂ້ານ້ອຍທົນຕໍ່ຄວາມຢ້ານກົວຂອງພຣະອົງ
ຂ້ານ້ອຍມີຈິດໃຈສັບສົນໄປ
16 ພຣະພິໂລດອັນແຮງກ້າຂອງພຣະອົງກວາດໄປເໜືອຂ້ານ້ອຍ
ສິ່ງທີ່ໜ້າຢ້ານຈາກພຣະອົງຕັດຂ້ານ້ອຍອອກ
17 ມັນອ້ອມຂ້ານ້ອຍໄວ້ຮອບແຕ່ເຊົ້າຮອດຄ່ຳເໝືອນຢ່າງນ້ຳຖ້ວມ
ມັນຖ້ວມຂ້ານ້ອຍລິບ
18 ພຣະອົງໃຫ້ຄົນຮັກ ແລະມິດສະຫາຍຫ່າງເຫີນຈາກຂ້ານ້ອຍ
ຜູ້ທີ່ຄຸ້ນເຄີຍກັບຂ້ານ້ອຍຢູ່ໃນຄວາມມືດ

# ບົດທີ 89

## ການສັນລະເສີນພຣະເຈົ້າ ເພາະຄຳໝັ້ນສັນຍາ ແລະຄວາມຍິນດີຂອງພຣະອົງ

*ມັດສະກິນບົດໜຶ່ງຂອງເອທານ ຄົນເອັດຊະຣາ.*

1 ຂ້ານ້ອຍຈະຮ້ອງເພງເຖິງຄວາມເມດຕາຂອງ ພຣະຜູ້ເປັນເຈົ້າ ເປັນນິດ
ດ້ວຍປາກຂອງຂ້ານ້ອຍ
ຂ້ານ້ອຍຈະປະກາດຄວາມສັດຊື່ຂອງພຣະອົງ
ຕະຫລອດທຸກຊົ່ວອາຍຸ
2 ດ້ວຍຂ້ານ້ອຍໄດ້ກ່າວແລ້ວວ່າ "ຄວາມເມດຕາຈະຕັ້ງຢູ່ເປັນນິດ
ພຣະອົງຈະສະຖາປະນາຄວາມສັດຊື່ຂອງພຣະອົງໃນຟ້າສະຫວັນ"

3 "ເຮົາໄດ້ກະທຳຄຳໝັ້ນສັນຍາກັບຜູ້ທີ່ຖືກເລືອກຂອງເຮົາ
ເຮົາໄດ້ປະຕິຍານກັບ ດາວິດ ຜູ້ຮັບໃຊ້ຂອງເຮົາ
4 ວ່າ 'ເຮົາຈະສະຖາປະນາເຊື້ອສາຍຂອງເຈົ້າໄວ້ເປັນນິດ
ແລະຈະສ້າງບັນລັງຂອງເຈົ້າໄວ້ທຸກຊົ່ວອາຍຸ'"

*ເຊລາ*

5 ຂ້າແດ່ພຣະຜູ້ເປັນເຈົ້າ ຟ້າສະຫວັນຈະສັນລະເສີນ
ການອັດສະຈັນຂອງພຣະອົງ
ແລະສັນລະເສີນຄວາມສັດຊື່ຂອງພຣະອົງ
ໃນທີ່ປະຊຸມຂອງບັນດາຜູ້ບໍລິສຸດດ້ວຍ
6 ເພາະຜູ້ໃດໃນຟ້າສະຫວັນຈະປຽບກັບ ພຣະຜູ້ເປັນເຈົ້າ ໄດ້
ໃນບັນດາລູກຫລານຂອງຜູ້ມີອຳນາດ ຜູ້ໃດຈະເໝືອນ ພຣະຜູ້ເປັນເຈົ້າ
7 ຄືອົງ ພຣະເຈົ້າ ຜູ້ເປັນທີ່ຢຳເກງຢ່າງຍິ່ງໃນສະພາຂອງບັນດາຜູ້ບໍລິສຸດ
ແລະບັນດາຜູ້ທີ່ຢູ່ຮອບພຣະອົງກໍຢຳເກງພຣະອົງ
8 ຂ້າແດ່ພຣະຜູ້ເປັນເຈົ້າ ພຣະເຈົ້າ ຈອມໂຍທາ ຂ້າແດ່ພຣະຜູ້ເປັນເຈົ້າ
ຜູ້ໃດຈະລິດທານຸພາບເທົ່າທຽມພຣະອົງ
ດ້ວຍຄວາມສັດຊື່ຂອງພຣະອົງຮອບພຣະອົງ

9 ພຣະອົງປົກຄອງການຮຸນແຮງຂອງທະເລ ເມື່ອຄື້ນສູງຂຶ້ນພຣະອົງໃຫ້ສະຫງົບລົງ
10 ພຣະອົງຕີ ເອຢິບ ເປັນທ່ອນໆເໝືອນຜູ້ຖືກຂ້າ
ພຣະອົງພັດສັດຕູຂອງພຣະອົງດ້ວຍລິດພຣະກອນຂອງພຣະອົງ
11 ຟ້າສະຫວັນເປັນຂອງພຣະອົງ ແຜ່ນດິນໂລກເປັນຂອງພຣະອົງດ້ວຍ
ພຣະອົງໄດ້ຕັ້ງໂລກ ແລະບັນດາສິ່ງທີ່ຢູ່ໃນນັ້ນ
12 ທິດເໜືອ ແລະທິດໃຕ້ ພຣະອົງກໍໄດ້ສ້າງ

ພູເຂົາຕາໂບກັບພູເຂົາເຮີໂມນ
ຈະສັນລະເສີນພຣະນາມຂອງພຣະອົງຢ່າງຊື່ນບານ
13 ພຣະອົງມີພຣະກອນອັນຊົງລິດ ພຣະຫັດຂອງພຣະອົງກໍແຂງແຮງ
ພຣະຫັດຂວາຂອງພຣະອົງກໍສູງ
14 ຄວາມທ່ຽງທຳ ແລະຄວາມຍຸດຕິທຳເປັນຮາກຖານແຫ່ງບັນລັງຂອງພຣະອົງ
ຄວາມເມດຕາ ແລະຄວາມຈິງຍ່າງນຳໜ້າພຣະອົງ
15 ຊົນຊາດທີ່ຮູ້ຈັກໂຫ່ຮ້ອງຢ່າງຊື່ນຊົມຍິນດີ ແລະຊື່ນບານກໍເປັນສຸກ
ຂ້າແດ່ພຣະຜູ້ເປັນເຈົ້າ
ພວກເຂົາຈະຍ່າງໃນຄວາມສະຫວ່າງແຫ່ງພຣະພັກຂອງພຣະອົງ
16 ພວກເຂົາຈະຊົມຊື່ນຍິນດີໃນພຣະນາມພຣະອົງແຕ່ເຊົ້າຮອດຄ່ຳ
ແລະໄດ້ຮັບການເຊີດຊູໂດຍຄວາມຊອບທຳຂອງພຣະອົງ
17 ເພາະພຣະອົງເປັນສະຫງ່າລາສີແຫ່ງກຳລັງຂອງພວກເຂົາທັງຫລາຍ
ແຕ່ໂດຍຄວາມຍິນດີຂອງພຣະອົງ
ເຂົາຂອງຂ້ານ້ອຍທັງຫລາຍຈະຖືກເຊີດຊູຂຶ້ນ
18 ເພາະຜູ້ປ້ອງກັນເຮົາທັງຫລາຍເປັນພຣະຜູ້ເປັນເຈົ້າ
ກະສັດຂອງເຮົາເປັນອົງບໍລິສຸດແຫ່ງອິສຣາເອນ

19 ໃນເວລາກ່ອນ ພຣະອົງກ່າວດ້ວຍນິມິດແກ່ຜູ້ບໍລິສຸດຂອງພຣະອົງ
ແລະກ່າວວ່າ “ເຮົາໄດ້ຊ່ວຍເຫລືອຊາຍໜຸ່ມຄົນໜຶ່ງ
ເຮົາໄດ້ເຊີດຊູຄົນທີ່ຖືກເລືອກຄົນໜຶ່ງເໜືອປະຊາຊົນ
20 ເຮົາໄດ້ພົບດາວິດຜູ້ຮັບໃຊ້ຂອງເຮົາ ດ້ວຍນ້ຳມັນບໍລິສຸດຂອງເຮົາ
ເຮົາໄດ້ເຈີມລາວໄວ້ແລ້ວ
21 ເພື່ອວ່າມືຂອງເຮົາຈະຢູ່ກັບລາວເປັນນິດ
ແລະແຂນຂອງເຮົາຈະເສີມກຳລັງຂອງລາວ
22 ສັດຕູຈະຮຽກຫຍັງຈາກລາວບໍ່ໄດ້ ບຸດແຫ່ງຄວາມຊົ່ວຮ້າຍຈະກົດຂີ່ລາວບໍ່ໄດ້
23 ເຮົາຈະຢຽບຢ່ຳສັດຕູຂອງລາວຕໍ່ໜ້າລາວ ແລະຕີຜູ້ທີ່ກຽດຊັງລາວໃຫ້ລົ້ມລົງ
24 ຄວາມສັດຊື່ ແລະຄວາມເມດຕາຂອງເຮົາຈະຢູ່ກັບລາວ
ແລະເຂົາຂອງລາວຈະເປັນທີ່ເຊີດຊູໂດຍນາມຂອງເຮົາ
25 ເຮົາຈະເອົາມືຂອງລາວວາງໄວ້ເທິງທະເລ
ແລະມືຂວາຂອງລາວເທິງແມ່ນ້ຳທັງຫລາຍ
26 ລາວຈະຮ້ອງຕໍ່ເຮົາວ່າ ‘ພຣະອົງເປັນພຣະບິດາຂອງຂ້ານ້ອຍ
ພຣະເຈົ້າຂອງຂ້ານ້ອຍ ແລະເປັນສີລາແຫ່ງຄວາມພົ້ນຂອງຂ້ານ້ອຍ’
27 ແລະເຮົາຈະໃຫ້ລາວເປັນບຸດຫົວປີຂອງເຮົາດ້ວຍ
ສູງກວ່າບັນດາກະສັດແຫ່ງແຜ່ນດິນໂລກ

28 ເຮົາຈະເກັບຄວາມເມດຕາຂອງເຮົາໄວ້ໃຫ້ລາວເປັນນິດ
ແລະຄຳໝັ້ນສັນຍາຂອງເຮົາຈະຕັ້ງໝັ້ນຄົງຢູ່ເພື່ອລາວ
29 ເຮົາຈະສະຖາປະນາເຊື້ອສາຍຂອງລາວໄວ້ເປັນນິດ
ທັງບັນລັງຂອງລາວໃຫ້ດຳລົງຕາບເທົ່າເວລາຂອງຟ້າສະຫວັນ
30 ຖ້າລູກຫລານຂອງລາວຖິ້ມບັນຍັດຂອງເຮົາ
ແລະບໍ່ດຳເນີນຕາມຄຳຕັດສິນຂອງເຮົາ
31 ຖ້າພວກເຂົາທັງຫລາຍຝ່າຝືນກົດເກນຂອງເຮົາ
ແລະບໍ່ໄດ້ຮັກສາບັນຍັດຂອງເຮົາ
32 ແລ້ວເຮົາຈະລົງໂທດການລະເມີດຂອງພວກເຂົາດ້ວຍໄມ້ແສ້
ແລະຄວາມຊົ່ວຊ້າຂອງພວກເຂົາດ້ວຍການຂ້ຽນຕີ
33 ແຕ່ຈະບໍ່ຖອນຄວາມເມດຕາຂອງເຮົາໄປຈາກລາວ
ຫລືລະເມີດຕໍ່ຄວາມສັດຊື່ຂອງເຮົາ
34 ເຮົາຈະບໍ່ຝ່າຝືນຄຳໝັ້ນສັນຍາຂອງເຮົາ
ຫລືພິກປີ້ນຖ້ອຍຄຳທີ່ອອກໄປຈາກຮີມປາກຂອງເຮົາ
35 ເຮົາປະຕິຍານດ້ວຍຄວາມບໍລິສຸດຂອງເຮົາເດັດຂາດວ່າ
ເຮົາຈະບໍ່ຂີ້ຕົວະຕໍ່ດາວິດ
36 ເຊື້ອສາຍຂອງລາວຈະດຳລົງຢູ່ເປັນນິດ
ບັນລັງຂອງລາວຈະຍືນຍາວເໝືອນຢ່າງດວງອາທິດຕໍ່ໜ້າເຮົາ
37 ຈະສະຖາປະນາໄວ້ເໝືອນດັ່ງດວງຈັນເປັນນິດ
ແລະເປັນຊັກຂີພະຍານອັນສັດຊື່ໃນທ້ອງຟ້າ”

*ເຊລາ*

38 ແຕ່ພຣະອົງໄດ້ຖິ້ມອອກໄປ ແລະກຽດຊັງ
ພຣະອົງຊົງພຣະພິໂລດຕໍ່ຜູ້ທີ່ເຈີມໄວ້ຂອງພຣະອົງ
39 ພຣະອົງໄດ້ບອກເລີກຄຳໝັ້ນສັນຍາກັບຜູ້ຮັບໃຊ້ຂອງພຣະອົງ
ພຣະອົງຊົງເຮັດໃຫ້ມົງກຸດຂອງເພິ່ນເປັນມົນທິນໂດຍຖິ້ມລົງສູ່ພື້ນດິນ
40 ພຣະອົງໄດ້ພັງຮົ້ວຂອງເພິ່ນທັງໝົດ
ພຣະອົງເຮັດໃຫ້ທີ່ກຳບັງເຂັ້ມແຂງຂອງເພິ່ນຫັກເພພັງ
41 ຄົນທັງປວງທີ່ຜ່ານໄປກໍປຸ້ນເພິ່ນ ເພິ່ນກາຍເປັນທີ່ນິນທາຂອງເພື່ອນບ້ານ
42 ພຣະອົງຍົກຍ້ອງມືຂວາຂອງສັດຕູຂອງເພິ່ນ
ພຣະອົງເຮັດໃຫ້ສັດຕູທັງໝົດຂອງເພິ່ນຊົມຊື່ນຍິນດີ
43 ຈິງແທ້ ພຣະອົງຫັນຄົມດາບຂອງເພິ່ນ
ແລະພຣະອົງບໍ່ໄດ້ເຮັດໃຫ້ເພິ່ນຕັ້ງໝັ້ນຢູ່ໃນສົງຄາມ
44 ພຣະອົງໄດ້ເຮັດໃຫ້ສະຫງ່າຂອງເພິ່ນເສື່ອມສູນໄປ

ແລະຖິ້ມບັນລັງຂອງເພິ່ນລົງສູ່ພື້ນດິນ
45 ພຣະອົງຕັດໄວໜຸ່ມຂອງເພິ່ນໃຫ້ສັ້ນເຂົ້າ ແລະຄຸມເພິ່ນໄວ້ດ້ວຍຄວາມອັບອາຍ

*ເຊລາ*

## ພຣະສັນຍາອັນໝັ້ນຄົງຂອງພຣະເຈົ້າຕໍ່ດາວິດ

46 ຂ້າແດ່ພຣະຜູ້ເປັນເຈົ້າພຣະອົງຈະເຊື່ອງພຣະອົງເອງຢູ່ດົນເທົ່າໃດ ເປັນນິດຫລື
ພຣະພິໂລດຂອງພຣະອົງຈະໄໝ້ຢູ່ດົນເທົ່າໃດ
47 ຂໍລະນຶກວ່າ ຊ່ວງຊີວິດຂອງຂ້ານ້ອຍສັ້ນເທົ່າໃດ
ເຫດໃດພຣະອົງເນລະມິດສ້າງບັນດາມະນຸດມາຢ່າງໄຮ້ປະໂຫຍດ
48 ມະນຸດຄົນໃດມີຊີວິດຢູ່ໄດ້ໂດຍບໍ່ຕ້ອງເຫັນຄວາມຕາຍ
ລາວຈະຊ່ວຍຈິດວິນຍານຂອງຕົນໃຫ້ພົ້ນຈາກມືຂອງຄວາມຕາຍໄດ້ຫລື

*ເຊລາ*

49 ຂ້າແດ່ອົງພຣະຜູ້ເປັນເຈົ້າຄວາມເມດຕາໃນເວລາກ່ອນຂອງພຣະອົງຢູ່ທີ່ໃດ
ຊຶ່ງພຣະອົງປະຕິຍານຕໍ່ດາວິດໂດຍຄວາມຈິງຂອງພຣະອົງ
50 ຂ້າແດ່ອົງພຣະຜູ້ເປັນເຈົ້າຂໍລະນຶກວ່າຜູ້ຮັບໃຊ້ຂອງພຣະອົງຖືກປ້ອຍດ່າຢ່າງໃດ
ແລະຂ້ານ້ອຍຮັບການໝິ່ນປະໝາດຂອງບັນດາຊົນຊາດ
ທີ່ມີອຳນາດໃຫຍ່ໄວ້ໃນເອິກຂອງຂ້ານ້ອຍຢ່າງໃດ
51 ຂ້າແດ່ພຣະຜູ້ເປັນເຈົ້ານັ້ນແຫລະ ສັດຕູຂອງພຣະອົງໄດ້ເຍາະເຍີ້ຍ
ນັ້ນແຫລະ ພວກເຂົາເຍາະເຍີ້ຍຮອຍຕີນຂອງຜູ້ທີ່ເຈີມໄວ້ຂອງພຣະອົງ

52 ສາທຸການແດ່ພຣະຜູ້ເປັນເຈົ້າເປັນນິດ ອາແມນ ແລະອາແມນ

# ບົດທີ 90

## ຄວາມອ່ອນແອຂອງມະນຸດ

1 ຂ້າແດ່ພຣະຜູ້ເປັນເຈົ້າພຣະອົງຊົງເປັນທີ່ເພິ່ງຂອງຂ້ານ້ອຍເລື້ອຍມາ.
2 ພຣະອົງຊົງເປັນພຣະເຈົ້າອົງຊົ່ວນິລັນດອນ ບໍ່ມີກົກແລະບໍ່ມີປາຍ
ກ່ອນສ້າງພູທັງຫລາຍ ແລະຜືນແຜ່ນດິນໂລກນີ້.

3 ພຣະອົງຊົງບອກໃຫ້ມະນຸດກັບຄືນໄປຫາສິ່ງທີ່ພວກເຂົາເຄີຍເປັນຢູ່ມາກ່ອນ
ພຣະອົງຊົງປັ້ນແປງພວກເຂົາໃຫ້ກັບຄືນເປັນດິນອີກ.
4 ສຳລັບພຣະອົງພັນປີເທົ່າກັບມື້ດຽວ
ມັນເໝືອນກັບມື້ວານນີ້ທີ່ຜ່ານໄປແລ້ວ
ແລະເໝືອນກັບເວລາສັ້ນໆໃນຕອນກາງຄືນ.
5 ພຣະອົງຊົງກວາດມະນຸດອອກເໝືອນກະແສນ້ຳກວາດ
ຊີວິດພວກເຂົາເໝືອນຄວາມຝັນ

ແລະພວກເຂົາກໍເໝືອນຕົ້ນຫຍ້າທີ່ສົດຊື່ນໃນຕອນເຊົ້າ.
6 ຊຶ່ງປົ່ງຂຶ້ນ ແລະອອກດອກຢ່າງເບີກບານ
ແລ້ວມັນກໍຫ່ຽວແຫ້ງ ແລະຕາຍໄປໃນຕອນແລງ.

7 ພວກຂ້ານ້ອຍໄດ້ຖືກທຳລາຍດ້ວຍພຣະພິໂລດຂອງພຣະອົງ
ພວກຂ້ານ້ອຍສັ່ນຕົກໃຈ
ດ້ວຍຄວາມຮ້າຍຢ່າງແຮງກ້າຂອງພຣະອົງ.
8 ພຣະອົງຊົງຮູ້ຈັກຄວາມຜິດຂອງພວກຂ້ານ້ອຍ
ແລະຊົງເຫັນຄວາມຜິດທີ່ພວກຂ້ານ້ອຍອຳໄວ້.
9 ພຣະພິໂລດຂອງພຣະອົງກໍບັ່ນທອນ
ໃຫ້ຊີວິດປະຈຳວັນຂອງພວກຂ້ານ້ອຍສັ້ນລົງ
ຊີວິດຂອງພວກຂ້ານ້ອຍໄດ້ມາເຖິງຈຸດຈົບເໝືອນດັ່ງສຽງລົມ.
10 ຕະຫລອດເຈັດສິບປີທີ່ພວກຂ້ານ້ອຍມີຊີວິດຢູ່
ແລະຖ້າວ່າພວກຂ້ານ້ອຍມີເຫື່ອແຮງຈົນຮອດແປດສິບປີ
ມັນກໍຍັງພາໃຫ້ພວກຂ້ານ້ອຍມີຄວາມຂັດສົນ ແລະຄວາມທຸກລຳບາກອີກ
ໃນບໍ່ຊ້ານີ້ຊີວິດຈະສິ້ນສຸດລົງແລະພວກຂ້ານ້ອຍກໍຈະຕາຍໄປ.
11 ແມ່ນໃຜຮູ້ຈັກລິດແຫ່ງພຣະພິໂລດຂອງພຣະອົງຢ່າງແທ້ຈິງ
ພຣະພິໂລດຂອງພຣະອົງນັ້ນໜ້າຢ້ານສໍ່າໃດ.
12 ຂໍພຣະອົງຊົງສັ່ງສອນໃຫ້ພວກຂ້ານ້ອຍເຂົ້າໃຈວ່າຊີວິດນີ້ນັ້ນສັ້ນຫລາຍ
ເພື່ອພວກຂ້ານ້ອຍຈະກາຍເປັນຄົນສະຫລາດ.
13 ຂ້າແດ່ພຣະຜູ້ເປັນເຈົ້າ
ຍັງດົນປານໃດພຣະອົງຈຶ່ງຈະຍົກໂທດແກ່ພວກຂ້ານ້ອຍ
ຂໍໂຜດສົງສານຜູ້ຮັບໃຊ້ຂອງພຣະອົງດ້ວຍ.
14 ໃນທຸກໆເຊົ້າ ຂໍໃຫ້ພວກຂ້ານ້ອຍເຕັມໄປດ້ວຍຄວາມຮັກ
ອັນໝັ້ນຄົງຂອງພຣະອົງ
ເພື່ອພວກຂ້ານ້ອຍຈະຮ້ອງເພງ ແລະຍິນດີຕະຫລອດຊົ່ວຊີວິດ.
15 ໃນຂະນະນີ້ ຂໍພຣະອົງຊົງປະທານຄວາມສຸກໃຫ້ພວກຂ້ານ້ອຍ
ເທົ່າກັນກັບຄວາມໂສກເສົ້າທີ່ພຣະອົງຊົງໃຫ້ແຕ່ກ່ອນ
ໃນຫລາຍປີທີ່ພວກຂ້ານ້ອຍມີຄວາມທຸກລຳບາກ.
16 ຂໍໃຫ້ພວກຂ້ານ້ອຍຜູ້ຮັບໃຊ້ຂອງພຣະອົງເຫັນກິດຈະການ
ອັນຍິ່ງໃຫຍ່ຂອງພຣະອົງ
ແລະຂໍໃຫ້ເຊື້ອສາຍຂອງພວກຂ້ານ້ອຍ
ເຫັນລັດສະໝີອັນຍິ່ງໃຫຍ່ຂອງພຣະອົງດ້ວຍ.
17 ຂ້າແດ່ພຣະຜູ້ເປັນເຈົ້າຂອງພວກຂ້ານ້ອຍ

ຂໍໃຫ້ພຣະພອນຂອງພຣະອົງດຳລົງຢູ່ນຳພວກຂ້ານ້ອຍ
ຂໍພຣະອົງຊົງກະທຳໃຫ້ວຽກງານຂອງພວກຂ້ານ້ອຍສຳເລັດຜົນ.

# ບົດທີ 91

## ພຣະເຈົ້າຜູ້ຊົງຄຸ້ມຄອງພວກເຮົາ

1 ຜູ້ທີ່ໄປເພິ່ງຄວາມປອດໄພໃນ ພຣະເຈົ້າ ອົງສູງສຸດ
ແລະຜູ້ທີ່ອາໄສຢູ່ພາຍໃຕ້ຮົ່ມເງົາຂອງພຣະຜູ້ຊົງອຳນາດຍິ່ງໃຫຍ່.

2 ຈະເວົ້າກັບພຣະອົງວ່າ,
"ພຣະອົງຊົງເປັນຜູ້ປ້ອງກັນແລະຄຸ້ມຄອງຂອງຂ້ານ້ອຍ
ພຣະອົງຊົງເປັນ ພຣະເຈົ້າ ຂອງຂ້ານ້ອຍ
ຂ້ານ້ອຍໄວ້ເນື້ອເຊື່ອໃຈໃນພຣະອົງ."
3 ພຣະອົງຊົງຊ່ອຍທ່ານໃຫ້ພົ້ນຈາກບ້ວງແຮ້ວອັນລັບລີ້ທຸກຢ່າງແນ່ນອນ
ແລະຈາກພະຍາດໂລຄານາໆປະການ.
4 ພຣະອົງຊົງຕຸ້ມທ່ານດ້ວຍປີກຂອງພຣະອົງ
ທ່ານຈະປອດໄພພາຍໃຕ້ການພິທັກຮັກສາຂອງພຣະອົງ
ຄວາມສັດຊື່ຂອງພຣະອົງຈະຄຸ້ມຄອງ ແລະປ້ອງກັນທ່ານໄວ້.
5 ທ່ານບໍ່ຕ້ອງຢ້ານອັນຕະລາຍໃນເວລາກາງຄືນ
ຫລືລູກທະນູທີ່ຍິງມາຢ່າງກະທັນຫັນໃນເວລາກາງເວັນ.
6 ຫລືພະຍາດໂລຄາທີ່ເກີດຕິດຕໍ່ໃນເວລາກາງຄືນ
ຕະຫລອດທັງໂຣກລະບາດທີ່ເກີດຂຶ້ນໃນເວລາກາງເວັນ.
7 ອາດຈະມີພັນຄົນລົ້ມລົງໃຫ້ທ່ານ
ສິບພັນຄົນຈະຕາຍອ້ອມຮອບທ່ານ
ແຕ່ທ່ານຈະບໍ່ໄດ້ຮັບອັນຕະລາຍຢ່າງໃດໝົດ.
8 ທ່ານຈະເຫັນວ່າ
ຄົນຊົ່ວຮ້າຍຈະຖືກລົງໂທດແບບໃດ.

9 ເນື່ອງຈາກວ່າທ່ານໄດ້ເອົາ ພຣະຜູ້ເປັນເຈົ້າ ເປັນຜູ້ປ້ອງກັນທ່ານ
ແລະເອົາ ພຣະເຈົ້າ ອົງສູງສຸດເປັນທີ່ເພິ່ງຂອງທ່ານ.
10 ໄພພິບັດຈະບໍ່ມາຕົກຖືກທ່ານ
ຄວາມໂຫດຮ້າຍຈະບໍ່ມາໃກ້ເຮືອນຂອງທ່ານ.
11 ພຣະເຈົ້າ ຈະຊົງສັ່ງພວກເທວະດາລົງມາຮັກສາເບິ່ງແຍງທ່ານ
ໃນທຸກບ່ອນທີ່ທ່ານໄປ.
12 ພວກເທວະດາຈະອູ້ມທ່ານໄວ້
ເພື່ອບໍ່ໃຫ້ທ່ານສະດຸດກ້ອນຫີນ.

13 ທ່ານຈະຜາບແພ້ສິ່ງຮ້າຍ ແລະງູພິດ
ໂດຍຢຽບມັນລົງໃຕ້ພື້ນຕີນຂອງທ່ານ.

14 ພຣະເຈົ້າຊົງກ່າວວ່າ, "ເຮົາຈະຊ່ອຍຜູ້ທີ່ຮັກເຮົາໃຫ້ພົ້ນໄພ
ແລະຄຸ້ມຄອງຜູ້ທີ່ຮູ້ຈັກເຮົາ.
15 ເວລາລາວເອີ້ນຫາເຮົາ ເຮົາຈະຕອບລາວ
ເມື່ອລາວຕົກຢູ່ໃນຄວາມທຸກຍາກລຳບາກ
ເຮົາຈະຊ່ອຍຊີວິດລາວ ແລະໃຫ້ກຽດແກ່ລາວ
ເຮົາຈະສະຖິດຢູ່ກັບລາວ.
16 ເຮົາຈະຕອບແທນລາວ ໂດຍໃຫ້ລາວມີຊີວິດຍືນຍາວ
ແລະເຮົາຈະຊ່ອຍໃຫ້ລາວພົ້ນໄພຢ່າງແນ່ນອນ."

# ບົດທີ 92

## ການສັນລະເສີນຄວາມດີຂອງພຣະເຈົ້າ

*ເພງສັນລະເສີນ ຫລືບົດເພງສຳລັບວັນສະບາໂຕ*

1 ເປັນການດີທີ່ຈະໂມທະນາພຣະຄຸນພຣະຜູ້ເປັນເຈົ້າຂ້າແດ່ອົງຜູ້ສູງສຸດ
ທີ່ຈະຮ້ອງເພງສັນລະເສີນພຣະນາມຂອງພຣະອົງ
2 ທີ່ຈະປະກາດພຣະເມດຕາຂອງພຣະອົງໃນຕອນເຊົ້າ
ແລະຄວາມສັດຊື່ຂອງພຣະອົງໃນກາງຄືນ
3 ເປັນສຽງກ້ອງໄປດ້ວຍພິນສິບສາຍ ແລະພິນໃຫຍ່ ແລະດ້ວຍສຽງພິນຄູ່

4 ຂ້າແດ່ພຣະຜູ້ເປັນເຈົ້າເພາະພຣະອົງເຮັດໃຫ້ຂ້ານ້ອຍຍິນດີ
ດ້ວຍພຣະລາຊະກິດຂອງພຣະອົງ
ຂ້ານ້ອຍຈະສະຫລອງໄຊຊະນະເນື່ອງໃນພຣະຫັດຖະກິດຂອງພຣະອົງ
5 ຂ້າແດ່ພຣະຜູ້ເປັນເຈົ້າພຣະລາຊະກິດຂອງພຣະອົງໃຫຍ່ຫລວງ
ພຣະດຳລິຂອງພຣະອົງສຸດເລິກລ້ຳ
6 ຄົນໂງ່ຈະຮູ້ບໍ່ໄດ້ ຄົນໂຫດຮ້າຍເຂົ້າໃຈເລື່ອງນີ້ບໍ່ໄດ້
7 ວ່າ ເຖິງແມ່ນຄົນຊົ່ວຈະງອກຂຶ້ນເໝືອນຢ່າງຫຍ້າ
ແລະຄົນກະທຳຄວາມຊົ່ວຊ້າທັງປວງຈະຈະເລີນຂຶ້ນ
ພວກເຂົາທັງຫລາຍຈະຖືກທຳລາຍເປັນນິດ
8 ຂ້າແດ່ພຣະຜູ້ເປັນເຈົ້າແຕ່ພຣະອົງຢູ່ເທິງທີ່ສູງເປັນນິດ
9 ຂ້າແດ່ພຣະຜູ້ເປັນເຈົ້າເພາະເບິ່ງແມ ສັດຕູຂອງພຣະອົງ ເພາະເບິ່ງແມ
ສັດຕູຂອງພຣະອົງຈະຈິບຫາຍ
ຄົນກະທຳຄວາມຊົ່ວຊ້າທັງປວງຈະຕ້ອງກະຈັດກະຈາຍໄປ
10 ແຕ່ພຣະອົງເຊີດຊູເຂົາຂອງຂ້ານ້ອຍເໝືອນກັບເຂົາງົວກະທິງ

ຂ້ານ້ອຍຈະຖືກເຈີມດ້ວຍນ້ຳມັນໃໝ່
11 ໃນຕາຂອງຂ້ານ້ອຍຈະເຫັນຄວາມປາດຖະໜາຂອງຂ້ານ້ອຍ
ຕໍ່ພວກສັດຕູຂອງຂ້ານ້ອຍນັ້ນສຳເລັດ
ຫູຂອງຂ້ານ້ອຍຈະໄດ້ຍິນເຖິງຄວາມປາດຖະໜາຂອງຂ້ານ້ອຍ
ຕໍ່ຄົນຊົ່ວທີ່ລຸກຂຶ້ນສູ້ຂ້ານ້ອຍນັ້ນສຳເລັດ

12 ຄົນຊອບທຳຈະງອກຂຶ້ນເໝືອນຢ່າງຕົ້ນຕານ
ພວກເຂົາຈະຈະເລີນຂຶ້ນເໝືອນຢ່າງຕົ້ນສົນສີດາໃນ ເລບານອນ
13 ຄົນທີ່ຖືກປູກໄວ້ໃນພຣະນິເວດຂອງ ພຣະຜູ້ເປັນເຈົ້າ ຈະຈະເລີນຂຶ້ນ
ໃນບໍລິເວນຂອງ ພຣະເຈົ້າ ຂອງເຮົາທັງຫລາຍ
14 ພວກເຂົາແກ່ແລ້ວກໍຍັງເກີດຜົນ ພວກເຂົາຈະມີນ້ຳລ້ຽງເຕັມ ແລະຂຽວສົດຢູ່
15 ເພື່ອສະແດງວ່າ ພຣະຜູ້ເປັນເຈົ້າ ນັ້ນທ່ຽງທຳ ພຣະອົງເປັນສີລາຂອງຂ້ານ້ອຍ
ໃນພຣະອົງບໍ່ມີຄວາມອະທຳ

# ບົດທີ 93

## ພຣະເຈົ້າຊົງເປັນເຈົ້າຊີວິດ

1 ພຣະຜູ້ເປັນເຈົ້າ ຊົງເປັນເຈົ້າຊີວິດ
ພຣະອົງຊົງຫົ່ມຫໍ່ດ້ວຍສະຫງ່າລາສີ
ແລະຊົງເຕັມໄປດ້ວຍອຳນາດ
ແນ່ນອນທີ່ສຸດ ແຜ່ນດິນໂລກຕັ້ງໝັ້ນຄົງຢູ່
ແລະຈະບໍ່ຍົກຍ້າຍໄປໃສ.
2 ຂ້າແດ່ ພຣະຜູ້ເປັນເຈົ້າ ພຣະທີ່ນັ່ງຂອງພຣະອົງຊົງມີຢູ່
ແລະພຣະອົງຊົງເປັນຢູ່ຕັ້ງແຕ່ໃດໆມາ.
3 ຂ້າແດ່ ພຣະຜູ້ເປັນເຈົ້າ ສຽງມະຫາສະໝຸດເລີກດັງກ້ອງ
ສະໜັ່ນຫວັ່ນໄຫວ.
4 ພຣະຜູ້ເປັນເຈົ້າ ຊົງເປັນຜູ້ປົກຄອງສູງສຸດໃນສະຫວັນຊັ້ນຟ້າ
ພຣະອົງຊົງຍິ່ງໃຫຍ່ກວ່າສຽງມະຫາສະໝຸດ
ແລະຊົງມີອຳນາດເໜືອກວ່າຄື້ນທະເລ.

5 ຂ້າແດ່ ພຣະຜູ້ເປັນເຈົ້າ ພຣະບັນຍັດຂອງພຣະອົງຊົງແນ່ແທ້
ພຣະວິຫານຂອງພຣະອົງຊົງບໍລິສຸດ ແລະເປັນຢູ່ຕະຫລອດໄປ.

# ບົດທີ 94

## ການຂໍຮ້ອງເລື່ອງການປົກຄອງແບບກົດຂີ່ ແລະການຂາດຄວາມເຄົາລົບ

1 ຂ້າແດ່ພຣະຜູ້ເປັນເຈົ້າ ເຈົ້າແຫ່ງການແກ້ແຄ້ນ ຂ້າແດ່ພຣະເຈົ້າ
ເຈົ້າແຫ່ງການແກ້ແຄ້ນ ຂໍສະແດງພຣະອົງ
2 ຂ້າແດ່ຜູ້ພິພາກສາໂລກ ຂໍລຸກຂຶ້ນ
ໃຫ້ຄົນຈອງຫອງໄດ້ຮັບຜົນຕອບສະໜອງອັນສົມກັບພວກເຂົາ
3 ຂ້າແດ່ພຣະຜູ້ເປັນເຈົ້າ ຄົນຊົ່ວຈະດົນເທົ່າໃດ ຄົນຊົ່ວຈະດຳລົງຢູ່ດົນເທົ່າໃດ
4 ພວກເຂົາຈະຈົ່ມ ແລະເວົ້າຢ່າງຈອງຫອງດົນເທົ່າໃດ
ຄົນກະທຳຄວາມຊົ່ວຊ້າທັງປວງຈະໂອ້ອວດດົນເທົ່າໃດ
5 ຂ້າແດ່ພຣະຜູ້ເປັນເຈົ້າ ພວກເຂົາຕີປະຊາຊົນຂອງພຣະອົງເປັນຕ່ອນໆ
ແລະເຮັດມໍລະດົກຂອງພຣະອົງໃຫ້ທຸກຍາກ
6 ພວກເຂົາສັງຫານແມ່ໝ້າຍ ແລະຄົນຕ່າງດ້າວ ແລະຄາດຕະກຳລູກກຳພ້າພໍ່
7 ພວກເຂົາກ່າວວ່າ "ພຣະຜູ້ເປັນເຈົ້າຈະບໍ່ແລເຫັນ
ພຣະເຈົ້າຂອງຢາໂຄບຈະບໍ່ຮູ້ເຫັນ"
8 ຄົນໂງ່ທີ່ສຸດຂອງປະຊາຊົນເອີຍ ຈົ່ງເຂົ້າໃຈສາ ຄົນໂງ່ທັງຫລາຍ
ເມື່ອໃດເຈົ້າຈຶ່ງຈະສະຫລາດ
9 ພຣະອົງຜູ້ສ້າງຫູ ພຣະອົງຈະບໍ່ໄດ້ຍິນຫລື ພຣະອົງຜູ້ປັ້ນຕາ
ພຣະອົງຈະບໍ່ເຫັນຫລື
10 ພຣະອົງຜູ້ຕີສອນບັນດາປະຊາຊາດ ພຣະອົງຈະບໍ່ນາບຄູ່ຫລື
ພຣະອົງຜູ້ສອນຄວາມຮູ້ໃຫ້ມະນຸດ ພຣະອົງຈະບໍ່ຮູ້ຫລື
11 ພຣະຜູ້ເປັນເຈົ້າຮູ້ຄວາມຄິດຂອງມະນຸດວ່າເປັນພຽງແຕ່ສິ່ງທີ່ບໍ່ມີປະໂຫຍດຫຍັງ

## ພຣະພອນແຫ່ງຄວາມທຸກຍາກ

12 ຂ້າແດ່ພຣະຜູ້ເປັນເຈົ້າ ຄົນທີ່ພຣະອົງຕີສອນນັ້ນກໍເປັນສຸກ
ຄືຄົນທີ່ພຣະອົງສອນດ້ວຍພຣະບັນຍັດຂອງພຣະອົງ
13 ເພື່ອຈະໃຫ້ລາວພັກຈາກມື້ລຳບາກຈົນກວ່າຈະຂຸດຂຸມໄວ້ໃຫ້ຄົນຊົ່ວ
14 ເພາະພຣະຜູ້ເປັນເຈົ້າຈະບໍ່ປະຖິ້ມປະຊາຊົນຂອງພຣະອົງ
ພຣະອົງຈະບໍ່ສະລະມໍລະດົກຂອງພຣະອົງ
15 ເພາະຄວາມຍຸດຕິທຳຈະກັບໄປຫາຄວາມຊອບທຳ
ແລະບັນດາຄົນທ່ຽງທຳໃນໃຈຈະຕິດຕາມໄປ
16 ຜູ້ໃດຈະລຸກຂຶ້ນຕໍ່ຕ້ານຄົນກະທຳຄວາມຊົ່ວແທນຂ້ານ້ອຍ
ຜູ້ໃດຈະຢືນຕໍ່ສູ້ຄົນກະທຳຄວາມຊົ່ວຊ້າແທນຂ້ານ້ອຍ
17 ຖ້າພຣະຜູ້ເປັນເຈົ້າບໍ່ແມ່ນຄວາມອຸປະຖຳຂອງຂ້ານ້ອຍ

ວິນຍານຂອງຂ້ານ້ອຍຄົງຢູ່ໃນຄວາມສະຫງັດ
18 ເມື່ອຂ້ານ້ອຍໄດ້ຄິດວ່າ “ຕີນຂອງຂ້ານ້ອຍພະລາດລົ້ມ” ຂ້າແດ່ພຣະຜູ້ເປັນເຈົ້າ
ຄວາມເມດຕາຂອງພຣະອົງຍຶດຂ້ານ້ອຍໄວ້
19 ເມື່ອຄວາມກັງວົນໃນໃຈຂອງຂ້ານ້ອຍມີຫລາຍ
ການເລົ້າໂລມຂອງພຣະອົງກໍໜູນຈິດໃຈຂອງຂ້ານ້ອຍໃຫ້ຊື່ນບານ

20 ບັນລັງແຫ່ງຄວາມຊົ່ວຊ້າຈະຮ່ວມມິດກັບພຣະອົງໄດ້ຫລື
ຄືຜູ້ທີ່ໃຊ້ກົດໝາຍປະກອບການຊົ່ວຮ້າຍ
21 ພວກເຂົາທັງຫລາຍຜູກມິດກັນຕໍ່ສູ້ຊີວິດຂອງຄົນຊອບທຳ
ແລະໄດ້ໂທດເລືອດທີ່ບໍ່ມີຄວາມຜິດ
22 ແຕ່ພຣະຜູ້ເປັນເຈົ້າເປັນທີ່ກຳບັງເຂັ້ມແຂງຂອງຂ້ານ້ອຍແລ້ວ
ແລະພຣະເຈົ້າຂອງຂ້ານ້ອຍເປັນສີລາບ່ອນລີ້ໄພຂອງຂ້ານ້ອຍ
23 ພຣະອົງຈະນຳຄວາມຊົ່ວຊ້າຂອງພວກເຂົາກັບມາສະໜອງພວກເຂົາ
ແລະຈະຕັດພວກເຂົາອອກ ເພາະຄວາມຊົ່ວຮ້າຍຂອງພວກເຂົາ
ພຣະຜູ້ເປັນເຈົ້າພຣະເຈົ້າຂອງເຮົາຈະຕັດພວກເຂົາອອກ

# ບົດທີ 95

## ການສັນລະເສີນພຣະເຈົ້າ

1 ມາເທີ້ນ ເຮົາພາກັນມາສັນລະເສີນພຣະຜູ້ເປັນເຈົ້າ
ຂໍໃຫ້ພວກເຮົາຮ້ອງເພງມ່ວນຊື່ນຖວາຍແດ່ພຣະຜູ້ຄຸ້ມຄອງ
ແລະພຣະຜູ້ຊ່ອຍໃຫ້ພົ້ນໄພຂອງພວກເຮົາ.
2 ພວກເຮົາຈົ່ງຫຍັບເຂົ້າມາຫາພຣະອົງເພື່ອກ່າວຂອບພຣະຄຸນ
ແລະຮ້ອງເພງສັນລະເສີນຢ່າງມ່ວນຊື່ນ.

3 ເພາະພຣະຜູ້ເປັນເຈົ້າທີ່ເປັນພຣະເຈົ້າອົງຍິ່ງໃຫຍ່
ແລະເປັນພຣະເຈົ້າມະຫາຊີວິດອົງຍິ່ງໃຫຍ່ເໜືອພະທັງຫລາຍ.
4 ພຣະອົງຊົງປົກຄອງເໜືອແຜ່ນດິນໂລກທັງໝົດ
ຈາກບ່ອນເລິກທີ່ສຸດໃນຖໍ້າ ຈົນເຖິງຍອດພູສູງ.
5 ພຣະອົງຊົງຄຸ້ມຄອງເໜືອນໍ້າທະເລ ຊຶ່ງພຣະອົງເປັນຜູ້ສ້າງຂຶ້ນ
ແລະພ້ອມທັງແຜ່ນດິນທີ່ພຣະອົງຊົງປະກອບຂຶ້ນມາເອງ.

6 ມາເທີ້ນ ໃຫ້ພວກເຮົາມາຂາບໄຫວ້ນະມັດສະການພຣະອົງ
ແລະຄຸເຂົ່າລົງຕໍ່ພຣະພັກພຣະຜູ້ເປັນເຈົ້າພຣະຜູ້ສ້າງຂອງພວກເຮົາ.
7 ພຣະອົງຊົງເປັນພຣະເຈົ້າຂອງພວກເຮົາ
ພວກເຮົາເປັນໄພ່ພົນທີ່ພຣະອົງຊົງເຝົ້າຮັກສາເບິ່ງແຍງ

ແລະເປັນຝູງຊົນຈຳນວນໜຶ່ງທີ່ພຣະອົງຊົງລ້ຽງໄວ້
ມື້ນີ້ຈົ່ງຟັງຄຳທີ່ພຣະອົງຊົງກ່າວ.
8 ຢ່າດື້ດ້ານເໝືອນດັ່ງປູ່ຍ່າຕາຍາຍຂອງພວກເຈົ້າທີ່ ເມຣິບາ
ແລະໃນຖິ່ນແຫ້ງແລ້ງກັນດານທີ່ ມາສາ.
9 ໃນທີ່ນັ້ນພວກເຂົາໄດ້ທົດລອງ ແລະພິສູດເບິ່ງເຮົາ
ໃນເມື່ອພວກເຂົາເອງກໍໄດ້ເຫັນສິ່ງທີ່ເຮົາ
ໄດ້ກະທຳແກ່ພວກເຂົາແລ້ວ.
10 ຕະຫລອດສີ່ສິບປີ ເຮົາໄດ້ເບື່ອໜ່າຍປະຊາຊົນເຫລົ່ານີ້
ເພາະພວກເຂົາບໍ່ມີຄວາມຈົງຮັກພັກດີ
ພວກເຂົາປະຕິເສດ ບໍ່ຍອມເຊື່ອຟັງຄຳສັ່ງຂອງເຮົາ.
11 ເຮົາໄດ້ຄຽດແຄ້ນ ແລະເຄີຍສັນຍາຢ່າງເດັດຂາດວ່າ
ພວກເຂົາຈະບໍ່ມີໂອກາດເຂົ້າໄປໃນແຜ່ນດິນ
ທີ່ເຮົາຈະໃຫ້ພວກເຂົາຢຸດພັກນັ້ນຈັກເທື່ອ.”

# ບົດທີ 96

## ພຣະເຈົ້າຊົງເປັນພຣະເຈົ້າມະຫາຊີວິດອົງສູງສຸດ

1 ຈົ່ງຮ້ອງເພງໃໝ່ຖວາຍແດ່ພຣະຜູ້ເປັນເຈົ້າ
ທົ່ວທັງໂລກຈົ່ງຮ້ອງເພງຖວາຍແດ່ພຣະອົງ.
2 ຈົ່ງຮ້ອງເພງຖວາຍແດ່ພຣະຜູ້ເປັນເຈົ້າ ແລະສັນລະເສີນພຣະນາມຂອງພຣະອົງ
ທຸກໆມື້ໃດຈົ່ງປະກາດຂ່າວດີທີ່ພຣະອົງໄດ້ຊົງຊ່ອຍໃຫ້ເຮົາພົ້ນໄພ.
3 ຈົ່ງປະກາດພຣະລັດສະໝີຂອງພຣະອົງແກ່ຊົນຊາດຕ່າງໆ
ແລະກິດຈະການອັນຍິ່ງໃຫຍ່ຂອງພຣະອົງແກ່ປະຊາຊົນທັງປວງ.
4 ພຣະຜູ້ເປັນເຈົ້າອົງຍິ່ງໃຫຍ່ ແລະຄວນທີ່ຈະສັນລະເສີນຢ່າງສູງສຸດ
ພຣະອົງຊົງເປັນທີ່ຢຳເກງເໜືອກວ່າພະອື່ນທັງປວງ.
5 ສ່ວນພະຂອງຊົນຊາດອື່ນບໍ່ແມ່ນພະແທ້
ແຕ່ພຣະຜູ້ເປັນເຈົ້າຊົງເປັນຜູ້ສ້າງສະຫວັນຊັ້ນຟ້າ.
6 ລັດສະໝີ ແລະລິດທານຸພາບກໍອ້ອມຮອບພຣະອົງ
ຄວາມຍິ່ງໃຫຍ່ ແລະຄວາມສະຫງ່າງາມຢູ່ໃນພຣະວິຫານຂອງພຣະອົງ.
7 ທຸກໆຄົນໃນໂລກນີ້ ຈົ່ງສັນລະເສີນພຣະຜູ້ເປັນເຈົ້າ
ຈົ່ງສັນລະເສີນລັດສະໝີ ແລະຄວາມຍິ່ງໃຫຍ່ຂອງພຣະອົງ.
8 ຈົ່ງສັນລະເສີນພຣະນາມຂອງພຣະຜູ້ເປັນເຈົ້າ
ແລະນຳເອົາເຄື່ອງຖວາຍບູຊາມາໃນພຣະວິຫານຂອງພຣະອົງ.

9 ຈົ່ງນອບນ້ອມຖ່ອມຕົວລົງຕໍ່ພຣະພັກຜູ້ຊົງບໍລິສຸດ ເມື່ອພຣະອົງຊົງມາປະກົດ
ທົ່ວທັງແຜ່ນດິນໂລກນີ້ ຈົ່ງສະທ້ານຢ້ານກົວຕໍ່ພຣະພັກຂອງພຣະອົງ.

10 ຈົ່ງກ່າວແກ່ຊົນຊາດທັງປວງວ່າ,
"ພຣະຜູ້ເປັນເຈົ້າຊົງເປັນພຣະເຈົ້າມະຫາຊີວິດ
ແຜ່ນດິນໂລກຕັ້ງໝັ້ນຄົງຢູ່ ຈະບໍ່ຍົກຍ້າຍໄປໃສ
ພຣະອົງຈະຊົງຕັດສິນປະຊາຊົນທັງປວງດ້ວຍຄວາມຍຸດຕິທຳ."

11 ແຜ່ນດິນໂລກ ແລະເທິງທ້ອງຟ້າຈົ່ງຊົມຊື່ນຍິນດີ
ນໍ້າທະເລ ແລະທຸກໆສິ່ງທີ່ມີຢູ່ໃນນັ້ນ ຈົ່ງຮ້ອງສຽງສະໜັ່ນຫວັ່ນໄຫວ.
12 ທົ່ງນາທັງຫລາຍພ້ອມທຸກໆສິ່ງທີ່ມີຢູ່ໃນນັ້ນ ຈົ່ງຊົມຊື່ນຍິນດີ
ຕົ້ນໄມ້ທີ່ຢູ່ໃນປ່າ ຈົ່ງມີສຽງມ່ວນຊື່ນຕໍ່ພຣະພັກພຣະຜູ້ເປັນເຈົ້າ.
13 ເພາະວ່າພຣະອົງຊົງສະເດັດມາປົກຄອງໂລກນີ້
ພຣະອົງຈະປົກຄອງປະຊາຊາດທັງປວງໃນໂລກ
ດ້ວຍຄວາມສັດຊື່ ແລະຍຸດຕິທຳ.

# ບົດທີ 97

## ຄວາມໃຫຍ່ໂຕມະໂຫລານແຫ່ງລາຊະອານາຈັກຂອງພຣະເຈົ້າ

1 ພຣະຜູ້ເປັນເຈົ້າຄອບຄອງ ຈົ່ງໃຫ້ແຜ່ນດິນໂລກຊົມຊື່ນຍິນດີ
ໃຫ້ເກາະນ້ອຍໆຫລວງຫລາຍນັ້ນຍິນດີ

2 ເມກ ແລະຄວາມມືດຫຸ້ມຢູ່ຮອບພຣະອົງ
ຄວາມຊອບທຳ ແລະຄວາມຍຸດຕິທຳ
ເປັນຮາກຖານແຫ່ງບັນລັງຂອງພຣະອົງ
3 ໄຟລຸກຢູ່ຕໍ່ພຣະພັກພຣະອົງ ແລະໄໝ້ສັດຕູຂອງພຣະອົງຮອບຂ້າງ
4 ຟ້າແລບຂອງພຣະອົງເຮັດໃຫ້ໂລກສະຫວ່າງ
ແຜ່ນດິນໂລກເຫັນແລ້ວສັ່ນສະທ້ານ
5 ພູເຂົາລະລາຍເໝືອນຢ່າງຂີ້ເຜີ້ງຕໍ່ເບື້ອງພຣະພັກພຣະຜູ້ເປັນເຈົ້າ
ຕໍ່ເບື້ອງພຣະພັກອົງພຣະຜູ້ເປັນເຈົ້າແຫ່ງແຜ່ນດິນໂລກທັງໝົດ

6 ຟ້າສະຫວັນເວົ້າເຖິງຄວາມຊອບທຳຂອງພຣະອົງ
ແລະຊົນຊາດທັງຫລາຍເຫັນສະຫງ່າລາສີຂອງພຣະອົງ
7 ໃຫ້ຜູ້ບົວລະບັດຮູບເຄົາລົບທັງຫລາຍໄດ້ອັບອາຍ
ຄືຜູ້ທີ່ອວດໃນຮູບເຄົາລົບຂອງຕົນ ໃຫ້ພະທັງຫລາຍຂາບລົງຕໍ່ພຣະອົງ

8 ຊີໂອນໄດ້ຍິນ ແລະຍິນດີ ແລະທິດາທັງປວງຂອງຢູດາຊື່ນຊົມຍິນດີ

ຂ້າແດ່ພຣະຜູ້ເປັນເຈົ້າ ເພາະຄຳພິພາກສາຂອງພຣະອົງ
9 ຂ້າແດ່ພຣະຜູ້ເປັນເຈົ້າ ເພາະພຣະອົງສູງສຸດເໜືອແຜ່ນດິນໂລກທັງໝົດ
ພຣະອົງສູງເດັ່ນກວ່າພະທັງປວງ

10 ທ່ານຜູ້ທີ່ຮັກພຣະຜູ້ເປັນເຈົ້າກໍຈົ່ງກຽດຊັງຄວາມຊົ່ວ
ພຣະອົງຮັກສາຊີວິດຜູ້ບໍລິສຸດຂອງພຣະອົງ
ພຣະອົງຊ່ວຍພວກເຂົາໃຫ້ພົ້ນຈາກມືຂອງຄົນຊົ່ວ
11 ຄວາມສະຫວ່າງແຈ້ງຂຶ້ນແກ່ຄົນຊອບທຳ
ແລະຄວາມຊື່ນບານມີຂຶ້ນແກ່ຄົນໃຈທ່ຽງທຳ
12 ທ່ານຜູ້ຊອບທຳເອີຍ ຈົ່ງຊົມຊື່ນຍິນດີໃນພຣະຜູ້ເປັນເຈົ້າ
ແລະຖວາຍໂມທະນາເມື່ອລະນຶກເຖິງຄວາມບໍລິສຸດຂອງພຣະອົງ

# ບົດທີ 98

## ຈົ່ງໃຫ້ສິ່ງທັງປວງສັນລະເສີນພຣະເຈົ້າ

*ເພງສັນລະເສີນ*

1 ຈົ່ງຮ້ອງເພງບົດໃໝ່ຖວາຍພຣະຜູ້ເປັນເຈົ້າ ເພາະພຣະອົງ
ໄດ້ກະທຳການອັດສະຈັນ
ພຣະຫັດຂວາ ແລະພຣະກອນບໍລິສຸດຂອງພຣະອົງໄດ້ນຳຄວາມມີໄຊມາ
2 ພຣະຜູ້ເປັນເຈົ້າໃຫ້ຄວາມພົ້ນຂອງພຣະອົງປະກົດ
ພຣະອົງເຜີຍຄວາມຊອບທຳຂອງພຣະອົງໃນສາຍຕາຂອງບັນດາປະຊາຊາດ
3 ພຣະອົງລະນຶກເຖິງຄວາມເມດຕາ
ແລະຄວາມຈິງຂອງພຣະອົງຕໍ່ວົງວານອິສຣາເອນ
ທີ່ສຸດປາຍແຜ່ນດິນໂລກທັງໝົດໄດ້ເຫັນຄວາມພົ້ນຂອງພຣະເຈົ້າຂອງເຮົາ

4 ຊາວໂລກທັງໝົດເອີຍ ຈົ່ງເປັ່ງສຽງຊື່ນບານຖວາຍແດ່ພຣະຜູ້ເປັນເຈົ້າ
ເປັ່ງເປັນສຽງເພງຊື່ນບານ ແລະຮ້ອງເພງສັນລະເສີນ
5 ຈົ່ງຮ້ອງເພງສັນລະເສີນຖວາຍພຣະຜູ້ເປັນເຈົ້າດ້ວຍພິນຄູ່
ດ້ວຍພິນຄູ່ ຄືດ້ວຍສຽງເພງສັນລະເສີນ
6 ດ້ວຍສຽງແກ ແລະສຽງເປົ່າເຂົາສັດ ຈົ່ງເຮັດເປັນສຽງຊື່ນບານ
ຕໍ່ພຣະພັກພຣະຜູ້ເປັນເຈົ້າຄືພຣະມະຫາກະສັດ

7 ໃຫ້ທະເລຮ້ອງສຽງດັງກັບສິ່ງທັງປວງທີ່ຢູ່ໃນທະເລນັ້ນ
ໂລກ ແລະບັນດາຜູ້ທີ່ອາໄສຢູ່ໃນນັ້ນ
8 ໃຫ້ກະແສນໍ້າຕົບມືຂອງມັນ ໃຫ້ບັນດາໂນນພູຍິນດີນຳກັນ
9 ສະເພາະເບື້ອງພຣະພັກພຣະຜູ້ເປັນເຈົ້າ

ເພາະພຣະອົງສະເດັດມາພິພາກສາໂລກ
ພຣະອົງຈະພິພາກສາໂລກດ້ວຍຄວາມຊອບທຳ
ແລະຊົນຊາດທັງຫລາຍດ້ວຍຄວາມທ່ຽງທຳ

# ບົດທີ 99

## ການນະມັດສະການໃນຊີໂອນ

1 ພຣະຜູ້ເປັນເຈົ້າຊົງຄອບຄອງ ໃຫ້ຊົນຊາດທັງຫລາຍຕົວສັ່ນ
ພຣະອົງຜູ້ປະທັບລະຫວ່າງພວກເຄຣຸບ ໃຫ້ແຜ່ນດິນໂລກຫວັ່ນໄຫວ
2 ພຣະຜູ້ເປັນເຈົ້າຍິ່ງໃຫຍ່ຢູ່ໃນຊີໂອນ
ພຣະອົງສູງເດັ່ນຢູ່ເໜືອປະຊາຊາດທັງປວງ
3 ໃຫ້ພວກເຂົາສັນລະເສີນພຣະນາມອັນຍິ່ງໃຫຍ່ ແລະໜ້າຢ້ານກົວຂອງພຣະອົງ
ເພາະພຣະນາມນັ້ນບໍລິສຸດ

4 ລິດທານຸພາບຂອງກະສັດຮັກຄວາມຍຸດຕິທຳ
ພຣະອົງສະຖາປະນາຄວາມທ່ຽງທຳ
ພຣະອົງປະກອບຄວາມຍຸດຕິທຳ ແລະຄວາມຊອບທຳຂຶ້ນໃນຢາໂຄບ
5 ຈົ່ງຍົກຍໍພຣະກຽດພຣະຜູ້ເປັນເຈົ້າພຣະເຈົ້າຂອງເຮົາ
ແລະນະມັດສະການທີ່ແທ່ນຮອງພຣະບາດຂອງພຣະອົງ
ເພາະພຣະອົງບໍລິສຸດ

6 ໂມເຊ ແລະ ອາໂຣນຢູ່ໃນພວກປະໂລຫິດຂອງພຣະອົງ
ຊາມູເອນຢູ່ໃນພວກທີ່ທູນອອກພຣະນາມຂອງພຣະອົງດ້ວຍ
ພວກເພິ່ນຮ້ອງທູນພຣະຜູ້ເປັນເຈົ້າ ແລະພຣະອົງຕອບເພິ່ນເຫລົ່ານັ້ນ
7 ພຣະອົງກ່າວກັບເພິ່ນໃນເສົາເມກ
ເພິ່ນທັງປວງໄດ້ຮັກສາບັນດາພຣະໂອວາດຂອງພຣະອົງ
ແລະກົດທີ່ພຣະອົງປະທານແກ່ເພິ່ນ
8 ຂ້າແດ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງຂ້ານ້ອຍທັງຫລາຍ
ພຣະອົງຕອບເພິ່ນເຫລົ່ານັ້ນ ພຣະອົງເປັນພຣະເຈົ້າຜູ້ຍົກໂທດເພິ່ນເຫລົ່ານັ້ນ
ແຕ່ເປັນຜູ້ສະໜອງການກະທຳຜິດຂອງພວກເພິ່ນ

9 ຈົ່ງຍົກຍໍພຣະກຽດພຣະຜູ້ເປັນເຈົ້າພຣະເຈົ້າຂອງເຮົາ
ແລະນະມັດສະການທີ່ພູເຂົາອັນບໍລິສຸດຂອງພຣະອົງ
ເພາະພຣະຜູ້ເປັນເຈົ້າພຣະເຈົ້າຂອງເຮົາບໍລິສຸດ

# ບົດທີ 100

## ບົດເພງສັນລະເສີນ

1 ທົ່ວທັງໂລກນີ້ ຈົ່ງຮ້ອງເພງມ່ວນຊື່ນຖວາຍແດ່ພຣະຜູ້ເປັນເຈົ້າ.
2 ຈົ່ງນະມັດສະການພຣະອົງດ້ວຍຄວາມຊົມຊື່ນຍິນດີ
ແລະເຂົ້າມາຮ້ອງເພງຢ່າງມ່ວນຊື່ນຕໍ່ພຣະພັກຂອງພຣະອົງ.
3 ຈົ່ງຮູ້ໄວ້ເທີ້ນວ່າພຣະຜູ້ເປັນເຈົ້າແມ່ນພຣະເຈົ້າ
ພຣະອົງຊົງສ້າງພວກເຮົາ ແລະພວກເຮົາເປັນຂອງພຣະອົງ
ພວກເຮົາເປັນໄພ່ພົນຂອງພຣະອົງ ແລະເປັນຝູງແກະຂອງພຣະອົງ.
4 ຈົ່ງເຂົ້າໄປໃນພຣະວິຫານຂອງພຣະອົງເພື່ອກ່າວຂອບພຣະຄຸນ
ຈົ່ງໄປໃນວິຫານຂອງອັນສັກສິດຂອງພຣະອົງດ້ວຍການສັນລະເສີນ
ຈົ່ງຂອບພຣະຄຸນ ແລະສັນລະເສີນພຣະອົງ.
5 ພຣະຜູ້ເປັນເຈົ້າຊົງປະກອບດ້ວຍຄວາມດີ
ຄວາມຮັກຂອງພຣະອົງມີຢູ່ຕະຫລອດໄປ
ແລະຄວາມສັດຊື່ຂອງພຣະອົງກໍມີຢູ່ຕະຫລອດເວລາ.

# ບົດທີ 101

## ດາວິດປະຕິຍານວ່າຈະປະພຶດຢ່າງດີຮອບຄອບ

*ເພງສັນລະເສີນຂອງດາວິດ*

1 ຂ້ານ້ອຍຈະຮ້ອງເພງເລື່ອງຄວາມເມດຕາ ແລະຄວາມຍຸດຕິທຳ
ຂ້າແດ່ພຣະຜູ້ເປັນເຈົ້າຂ້ານ້ອຍຈະຮ້ອງເພງຖວາຍພຣະອົງ
2 ຂ້ານ້ອຍຈະປະພຶດຢ່າງສະຫລຽວສະຫລາດຕາມເສັ້ນທາງທີ່ດີຮອບຄອບ
ເມື່ອໃດພຣະອົງຈະສະເດັດມາຫາຂ້ານ້ອຍ
ຂ້ານ້ອຍຈະດຳເນີນດ້ວຍໃຈສັດຊື່ພາຍໃນເຮືອນຂອງຂ້ານ້ອຍ
3 ຂ້ານ້ອຍຈະບໍ່ຕັ້ງສິ່ງໃດໆທີ່ຊົ່ວຊ້າໄວ້ຕໍ່ໜ້າຕໍ່ຕາຂອງຂ້ານ້ອຍ
ຂ້ານ້ອຍກຽດຊັງກິດຈະການຂອງຜູ້ທີ່ບິດໄປບິດມາ
ກິດຈະການນັ້ນຈະບໍ່ຕິດຂ້ານ້ອຍ
4 ຂ້ານ້ອຍຈະຢູ່ຫ່າງໄກຈາກຄົນໃຈດື້ດ້ານ
ຂ້ານ້ອຍຈະບໍ່ຄຸ້ນເຄີຍກັບຄົນຊົ່ວຮ້າຍເລີຍ
5 ບຸກຄົນທີ່ໃສ່ຮ້າຍເພື່ອນບ້ານລັບໆນັ້ນ ຂ້ານ້ອຍຈະຕັດລາວອອກ
ຄົນທີ່ມີຕາຈອງຫອງ ແລະໃຈທີ່ຈອງຫອງ ຂ້ານ້ອຍຈະບໍ່ຍອມທົນນຳ
6 ໃນຕາຂ້ານ້ອຍຈະຊອກຫາຄົນທີ່ສັດຊື່ໃນແຜ່ນດິນ
ເພື່ອພວກເຂົາຈະອາໄສຢູ່ກັບຂ້ານ້ອຍ ຜູ້ໃດດຳເນີນໃນທາງທີ່ດີຮອບຄອບ
ຜູ້ນັ້ນຈະບົວລະບັດຂ້ານ້ອຍ

7 ຜູ້ທີ່ປະພຶດຫລອກລວງຈະບໍ່ໄດ້ອາໄສຢູ່ໃນເຮືອນຂອງຂ້ານ້ອຍ
ຄົນໃດທີ່ເວົ້າບໍ່ຈິງຈະບໍ່ຢືນຢົງຢູ່ໃນສາຍຕາຂອງຂ້ານ້ອຍ
8 ທຸກໆເຊົ້າຂ້ານ້ອຍຈະທຳລາຍຄົນຊົ່ວທັງຫລາຍໃນແຜ່ນດິນ
ຕັດຜູ້ເຮັດຊົ່ວອອກໃຫ້ໝົດຈາກນະຄອນຂອງ ພຣະຜູ້ເປັນເຈົ້າ

# ບົດທີ 102

## ຄຳອ້ອນວອນຂອງຄົນທຸກໃຈ ຄຳອະທິຖານຂອງຜູ້ຖືກຂົ່ມເຫັງ

*ເມື່ອລາວເບື່ອໜ່າຍໃຈ ແລະລະບາຍຄວາມບັ່ນຕໍ່ພຣະພັກພຣະຜູ້ເປັນເຈົ້າ*

1 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຮັບຟັງຄຳອະທິຖານຂອງຂ້ານ້ອຍ
ຂໍສຽງຮ້ອງຂອງຂ້ານ້ອຍມາເຖິງພຣະອົງ
2 ຂໍຢ່າເຊື່ອງພຣະພັກຂອງພຣະອົງຈາກຂ້ານ້ອຍໃນວັນທຸກໃຈຂອງຂ້ານ້ອຍ
ຂໍຫງ່ຽງພຣະກັນຮັບຟັງຂ້ານ້ອຍ
ຂໍຕອບຂ້ານ້ອຍໂດຍໄວໃນມື້ທີ່ຂ້ານ້ອຍຮ້ອງທູນຕໍ່ພຣະອົງ
3 ເພາະວັນຂອງຂ້ານ້ອຍໝົດໄປເໝືອນຢ່າງຄວັນ
ແລະກະດູກຂອງຂ້ານ້ອຍໄໝ້ຢູ່ໃນເຕົາໄຟ
4 ຈິດໃຈຂອງຂ້ານ້ອຍຖືກນາບຂູ່ ແລະຫ່ຽວແຫ້ງໄປເໝືອນກັບຫຍ້າ
ຂ້ານ້ອຍຈຶ່ງລືມຮັບປະທານອາຫານຂອງຂ້ານ້ອຍ
5 ຍ້ອນສຽງຮ້ອງຂອງຂ້ານ້ອຍ
ກະດູກຂອງຂ້ານ້ອຍເກາະຕິດເນື້ອຂອງຂ້ານ້ອຍ
6 ຂ້ານ້ອຍເປັນເໝືອນນົກຫົງໃນຖິ່ນແຫ້ງແລ້ງກັນດານ
ດັ່ງນົກເຄົ້າແມວແຫ່ງທະເລຊາຍ
7 ຂ້ານ້ອຍເຝົ້າຢູ່ ຂ້ານ້ອຍເປັນເໝືອນນົກກະຈອກໂດດດ່ຽວເທິງຫລັງຄາເຮືອນ
8 ສັດຕູຂອງຂ້ານ້ອຍເຍາະເຍີ້ຍຂ້ານ້ອຍແຕ່ເຊົ້າຈົນຄ່ຳ
ຜູ້ທີ່ບ້າໃສ່ຂ້ານ້ອຍປະຕິຍານຕົວຕໍ່ຕ້ານຂ້ານ້ອຍ
9 ເພາະຂ້ານ້ອຍກິນຂີ້ເທົ່າຕ່າງອາຫານ ແລະປົນນ້ຳຕາເຂົ້າກັບເຄື່ອງດື່ມ
10 ເຫດດ້ວຍພຣະພິໂລດ ແລະຄວາມໂກດຮ້າຍຂອງພຣະອົງ
ເພາະພຣະອົງຊູຂ້ານ້ອຍຂຶ້ນ ແລະໂຍນຂ້ານ້ອຍຖິ້ມໄປ
11 ວັນເວລາຂອງຂ້ານ້ອຍເປັນເໝືອນເງົາເວລາແລງ
ຂ້ານ້ອຍຫ່ຽວແຫ້ງໄປເໝືອນກັບຫຍ້າ

## ຈົ່ງລະນຶກເຖິງພຣະເມດຕາທັງຫລາຍຂອງພຣະເຈົ້າ

12 ຂ້າແດ່ພຣະຜູ້ເປັນເຈົ້າ ແຕ່ພຣະອົງຈະປະທັບຢູ່ເປັນນິດ
ການລະນຶກເຖິງພຣະອົງດຳລົງຢູ່ທຸກຊົ່ວອາຍຸ
13 ພຣະອົງຈະລຸກຂຶ້ນເມດຕາຊີໂອນ ເພາະເຖິງເວລາທີ່ຈະພຣະກະລຸນານາງ ເອີ

ເວລາກຳນົດມາເຖິງແລ້ວ
14 ເພາະຜູ້ຮັບໃຊ້ຂອງພຣະອົງຮັກກ້ອນຫີນຂອງນາງຫລາຍ
ແລະສົງສານຂີ້ຝຸ່ນຂອງນາງ
15 ບັນດາປະຊາຊາດຈະຢ້ານກົວພຣະນາມຂອງ ພຣະຜູ້ເປັນເຈົ້າ
ແລະບັນດາກະສັດຂອງແຜ່ນດິນໂລກຢ້ານສະຫງ່າລາສີຂອງພຣະອົງ
16 ເພາະເມື່ອ ພຣະຜູ້ເປັນເຈົ້າ ຈະສ້າງຊີໂອນນັ້ນ
ພຣະອົງຈະປະກົດດ້ວຍສະຫງ່າລາສີຂອງພຣະອົງ
17 ພຣະອົງຈະສົນພຣະໄທໃນຄຳອະທິຖານຂອງຄົນໝົດເນື້ອໝົດຕົວ
ແລະຈະບໍ່ດູໝິ່ນຄຳອະທິຖານຂອງພວກເຂົາ

18 ຈົ່ງບັນທຶກເລື່ອງນີ້ໄວ້ໃຫ້ລຸ້ນທີ່ຈະຕໍ່ມາ
ເພື່ອປະຊາຊົນທີ່ຍັງຈະສ້າງມານັ້ນຈະໄດ້ສັນລະເສີນ ພຣະຜູ້ເປັນເຈົ້າ
19 ເພາະພຣະອົງຊົງທອດພຣະເນດລົງມາຈາກທີ່ສູງອັນບໍລິສຸດຂອງພຣະອົງ
ຈາກຟ້າສະຫວັນ ພຣະຜູ້ເປັນເຈົ້າ ທອດພຣະເນດແຜ່ນດິນໂລກ
20 ເພື່ອຮັບຟັງສຽງຮ້ອງຂອງຊະເລີຍ
ເພື່ອປ່ອຍຄົນທີ່ຕ້ອງເຖິງຕາຍໃຫ້ເປັນອິດສະຫລະ
21 ເພື່ອຈະປະກາດພຣະນາມຂອງ ພຣະຜູ້ເປັນເຈົ້າ ໃນຊີໂອນ
ແລະກ່າວສັນລະເສີນພຣະອົງໃນ ເຢຣູຊາເລັມ
22 ຂະນະເມື່ອຊົນຊາດທັງຫລາຍລວບລວມກັນ  ທັງບັນດາລາຊະອານາຈັກ
ເພື່ອບົວລະບັດ ພຣະຜູ້ເປັນເຈົ້າ

23 ພຣະອົງຫັກກຳລັງຂອງຂ້ານ້ອຍກາງທາງ
ພຣະອົງເຮັດໃຫ້ວັນເວລາຂອງຂ້ານ້ອຍສັ້ນເຂົ້າ
24 ຂ້ານ້ອຍກ່າວວ່າ  "ຂ້າແດ່ພຣະເຈົ້າຂອງຂ້ານ້ອຍ
ຂໍຢ່ານຳຂ້ານ້ອຍໄປໃນເຄິ່ງກາງວັນເວລາຂອງຂ້ານ້ອຍ
ພຣະອົງຜູ້ເປັນປີເດືອນດຳລົງຢູ່ຕະຫລອດທຸກຊົ່ວອາຍຸ"
25 ເມື່ອຕົ້ນເດີມ  ພຣະອົງຊົງວາງຮາກຖານຂອງແຜ່ນດິນໂລກ
ແລະຟ້າສະຫວັນເປັນພຣະຫັດຖະກິດຂອງພຣະອົງ
26 ສິ່ງເຫລົ່ານີ້ຈະຈິບຫາຍໄປ  ແຕ່ພຣະອົງຈະດຳລົງຢູ່
ບັນດາສິ່ງເຫລົ່ານີ້ຈະເກົ່າໄປເໝືອນກັບເຄື່ອງນຸ່ງຫົ່ມ
ພຣະອົງຈະປ່ຽນສິ່ງເຫລົ່ານີ້ໄວ້ດັ່ງເສື້ອຄຸມ
ແລະສິ່ງເຫລົ່ານັ້ນກໍຈະປ່ຽນແປງໄປ
27 ແຕ່ພຣະອົງຍັງເປັນຢ່າງເດີມ  ແລະປີເດືອນຂອງພຣະອົງຈະບໍ່ສິ້ນສຸດ
28 ລູກຫລານຂອງບັນດາຜູ້ຮັບໃຊ້ຂອງພຣະອົງຈະຢູ່ໝັ້ນຄົງ
ແລະເຊື້ອສາຍຂອງພວກເຂົາຈະໄດ້ຮັບການສະຖາປະນາ

ຕໍ່ເບື້ອງພຣະພັກພຣະອົງ

# ບົດທີ 103

## ຄວາມຮັກຂອງພຣະເຈົ້າ

1 ຈິດວິນຍານຂອງຂ້ອຍເອີຍ ຈົ່ງສັນລະເສີນພຣະຜູ້ເປັນເຈົ້າ
ຂ້ອຍສັນລະເສີນພຣະນາມອັນບໍລິສຸດຂອງພຣະອົງດ້ວຍໝົດຈິດໝົດໃຈ.
2 ຈິດວິນຍານຂອງຂ້ອຍເອີຍ ຈົ່ງສັນລະເສີນພຣະອົງ
ແລະຢ່າລືມຄຸນຄວາມດີຂອງພຣະອົງ.
3 ພຣະອົງຊົງໃຫ້ອະໄພຄວາມບາບທັງປວງຂອງຂ້ອຍ
ແລະປິ່ນປົວພະຍາດໂລຄາຕ່າງໆຂອງຂ້ອຍໃຫ້ຫາຍດີ.
4 ພຣະອົງຊົງຊ່ອຍຂ້ອຍໃຫ້ພົ້ນຈາກຕາຍ
ແລະຊົງອວຍພອນຂ້ອຍດ້ວຍຄວາມຮັກ ແລະຄວາມເມດຕາ.
5 ພຣະອົງຊົງເຮັດໃຫ້ຊີວິດຂອງຂ້ອຍເຕັມໄປດ້ວຍສິ່ງທີ່ດີ
ດັ່ງນີ້ ຂ້ອຍຈຶ່ງໜຸ່ມແໜ້ນ ແລະແຂງແຮງເໝືອນດັ່ງນົກອິນຊີ.

6 ພຣະຜູ້ເປັນເຈົ້າຊົງແກ້ແຄ້ນ ແລະໃຫ້ຄວາມເປັນທຳແກ່ຜູ້ທີ່ຖືກຂົ່ມເຫັງ.
7 ພຣະອົງຊົງບອກແຜນການຂອງພຣະອົງແກ່ໂມເຊ
ແລະເຮັດໃຫ້ພວກອິສຣາເອນເຫັນກິດຈະການອັນຍິ່ງໃຫຍ່ຂອງພຣະອົງ.
8 ພຣະຜູ້ເປັນເຈົ້າຊົງເຕັມໄປດ້ວຍພຣະເມດຕາກະລຸນາ
ພຣະອົງຊົງເຕັມໄປດ້ວຍຄວາມຮັກອັນໝັ້ນຄົງ ແລະບໍ່ຊົງພຣະພິໂລດງ່າຍ.
9 ພຣະອົງບໍ່ຊົງຕິຕຽນ ແລະບໍ່ຊົງພຣະພິໂລດຕະຫລອດໄປ.
10 ພຣະອົງບໍ່ໄດ້ຊົງລົງໂທດພວກເຮົາຕາມທີ່ພວກເຮົາສົມຄວນຈະໄດ້ຮັບ
ຫລືບໍ່ຕອບແທນໃນຄວາມບາບແລະການຜິດພາດຂອງພວກເຮົາ.

11 ຟ້າສະຫວັນສູງເໜືອແຜ່ນດິນໂລກຫລາຍເທົ່າໃດ
ຄວາມຮັກທີ່ພຣະອົງຊົງມີແກ່ຜູ້ທີ່ຢຳເກງພຣະອົງກໍສູງຫລາຍເທົ່ານັ້ນ.
12 ທິດຕາເວັນອອກໄກຈາກທິດຕາເວັນຕົກຫລາຍເທົ່າໃດ
ພຣະອົງກໍຊົງຍົກຄວາມບາບຂອງພວກເຮົາອອກໄປໄກຫລາຍເທົ່ານັ້ນ.
13 ພໍ່ເມດຕາກະລຸນາຕໍ່ລູກຫລາຍເທົ່າໃດ
ພຣະຜູ້ເປັນເຈົ້າກໍຊົງເມດຕາກະລຸນາ
ຕໍ່ຜູ້ທີ່ຢຳເກງພຣະອົງຫລາຍເທົ່ານັ້ນ.
14 ພຣະອົງຊົງຮູ້ດີວ່າພວກເຮົາຖືກສ້າງມາຢ່າງໃດ
ແລະຊົງຈື່ຈຳສະເໝີວ່າພວກເຮົາເປັນຂີ້ຝຸ່ນດິນ.

15 ສ່ວນມະນຸດນັ້ນ ຊີວິດຂອງລາວປຽບເໝືອນຕົ້ນຫຍ້າ

ລາວຈະເລີນເຕີບໂຕຂຶ້ນເໝືອນດັ່ງດອກໄມ້ປ່າ.
16 ເມື່ອລົມພັດ ມັນກໍລົ້ມຫັກເສຍໄປ
ແລະບໍ່ມີຜູ້ໃດເຫັນມັນອີກ.
17 ແຕ່ວ່າຄວາມຮັກຂອງ ພຣະຜູ້ເປັນເຈົ້າ
ຊົງມີແກ່ຜູ້ທີ່ຖວາຍກຽດແດ່ພຣະອົງຕະຫລອດໄປ
ແລະຄວາມຊອບທຳຂອງພຣະອົງຊົງໝັ້ນຄົງຢູ່ທຸກຊົ່ວອາຍຸຄົນ.
18 ແລະແກ່ຜູ້ທີ່ປະຕິບັດຕາມຂໍ້ຄຳສັນຍາຂອງພຣະອົງ
ຄືຜູ້ທີ່ເຊື່ອຟັງຢ່າງຈິງໃຈໃນຂໍ້ຄຳສັ່ງຂອງພຣະອົງ.
19 ພຣະຜູ້ເປັນເຈົ້າຊົງຕັ້ງພຣະທີ່ນັ່ງໄວ້ໃນສະຫວັນຊັ້ນຟ້າ
ພຣະອົງຊົງເປັນ ພຣະເຈົ້າມະຫາຊີວິດປົກຄອງທຸກສິ່ງ.

20 ພວກເທວະດາອົງຍິ່ງໃຫຍ່
ອົງທີ່ປະຕິບັດຕາມຄຳສັ່ງຂອງ ພຣະເຈົ້າ
ແລະຟັງສິ່ງທີ່ພຣະອົງຊົງກ່າວ
ຈົ່ງສັນລະເສີນ ພຣະຜູ້ເປັນເຈົ້າ ເທີ້ນ.
21 ຜູ້ທີ່ມີອຳນາດຢູ່ເທິງສະຫວັນຊັ້ນຟ້າທັງໝົດ
ຊຶ່ງເປັນຜູ້ຮັບໃຊ້ທີ່ປະຕິບັດຕາມພຣະປະສົງຂອງພຣະອົງ
ຈົ່ງສັນລະເສີນ ພຣະຜູ້ເປັນເຈົ້າ.
22 ທຸກໆສິ່ງທີ່ພຣະອົງຊົງສ້າງມາ
ທຸກໆ ບ່ອນທີ່ພຣະອົງຊົງປົກຄອງ
ຈົ່ງສັນລະເສີນ ພຣະຜູ້ເປັນເຈົ້າ
ຈິດວິນຍານຂອງຂ້ອຍເອີຍ ຈົ່ງສັນລະເສີນພຣະອົງ.

# ບົດທີ 104

## ການສັນລະເສີນພຣະຜູ້ຊົງສ້າງ

1 ຈິດວິນຍານຂອງຂ້ອຍເອີຍ ຈົ່ງສັນລະເສີນພຣະອົງ
ຂ້າແດ່ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງຂ້ານ້ອຍ
ພຣະອົງຊົງເປັນ ພຣະເຈົ້າອົງຍິ່ງໃຫຍ່ແທ້
ພຣະອົງຊົງປະກອບດ້ວຍອຳນາດ ແລະລັດສະໝີ.
2 ພຣະກາຍຂອງພຣະອົງຊົງຫຸ້ມຫໍ່ດ້ວຍແສງສະຫວ່າງ
ພຣະອົງຊົງກາງສະຫວັນຊັ້ນຟ້າອອກເໝືອນກາງຜ້າເຕັນ.
3 ແລະຊົງສ້າງບ່ອນຢູ່ຂອງພຣະອົງເທິງແມ່ນໍ້າທັງຫລາຍ
ພຣະອົງຊົງໃຊ້ກ້ອນເມກເປັນລາຊະລົດຂອງພຣະອົງ
ແລະຊົງສະເດັດມາກັບລົມ.

4 ພຣະອົງຊົງໃຊ້ລົມເປັນຜູ້ສົ່ງຂ່າວ
ແລະໃຊ້ແສງຟ້າແມບເປັນຜູ້ຮັບໃຊ້ຂອງພຣະອົງ.

5 ພຣະອົງຊົງຕັ້ງແຜ່ນດິນໂລກໄວ້ເທິງຮາກຖານຂອງມັນຢ່າງໝັ້ນຄົງ
ແລະມັນຈະບໍ່ເຄື່ອນໄຫວໄປມາຈັກເທື່ອ.
6 ພຣະອົງຊົງໃຫ້ມະຫາສະໝຸດຫຸ້ມຫໍ່ມັນເໝືອນດັ່ງເສື້ອຜ້າຫຸ່ມຫໍ່ຮ່າງກາຍ
ແລະໃຫ້ນໍ້າຢູ່ເທິງພູທັງຫລາຍ.
7 ແຕ່ວ່າເມື່ອພຣະອົງຊົງສັ່ງນໍ້ານັ້ນກໍໜີໄປ
ເວລາມັນໄດ້ຍິນສຽງຮ້ອງສັ່ງຂອງພຣະອົງມັນໄດ້ໄຫລໜີໄປ.
8 ມັນໄດ້ໄຫລຜ່ານພູທັງຫລາຍລົງໄປຕາມຮ່ອມພູ
ສູ່ບ່ອນທີ່ພຣະອົງຊົງສ້າງໄວ້ສຳລັບມັນ.
9 ພຣະອົງຕັ້ງເຂດແດນໄວ້ ນໍ້າມັນກໍບໍ່ສາມາດໄຫລຜ່ານເຂົ້າມາໄດ້
ເພື່ອບໍ່ໃຫ້ນໍ້ານັ້ນໄຫລຖ້ວມແຜ່ນດິນໂລກນີ້ອີກ.

10 ພຣະອົງຊົງສ້າງນໍ້າບໍ່ໃຫ້ໄຫລໄປຕາມຮ່ອມພູ
ແລະນໍ້າກໍໄຫລໄປ.
11 ຊຶ່ງຕຽມໄວ້ໃຫ້ສັດປ່າກິນ
ແລະບໍ່ໃຫ້ລໍປ່າຫິວນໍ້າ.
12 ຢູ່ຕົ້ນໄມ້ໃກ້ໆ ແຄມນໍ້ານັ້ນ
ນົກໄດ້ເຮັດຮັງໃສ່ ແລະຮ້ອງຢ່າງມ່ວນຊື່ນ.
13 ພຣະອົງຊົງໃຫ້ຝົນຈາກສະຫວັນຊັ້ນຟ້າຕົກລົງໃສ່ພູທັງຫລາຍ
ຜົນການກະທຳຂອງພຣະອົງກໍເຕັມທົ່ວໂລກນີ້.

14 ພຣະອົງຊົງໃຫ້ຫຍ້າເກີດຂຶ້ນສຳລັບຝູງສັດ
ແລະພືດຜົນຕ່າງໆ ໃຫ້ມະນຸດປູກຝັງ
ເພື່ອລາວຈະມີຜົນລະປູກ.
15 ຄືເຫລົ້າອະງຸ່ນທີ່ເຮັດໃຫ້ລາວມີຄວາມສຸກ
ນໍ້າມັນຫອມຈາກໝາກກອກທີ່ໃຊ້ທາໃຫ້ໜ້າຊື່ນຕາບານ
ແລະເຂົ້າຈີ່ທີ່ໃຫ້ລາວມີເຫື່ອແຮງຂຶ້ນ.

16 ສ່ວນຕົ້ນສົນທີ່ເລບານອນຊຶ່ງເປັນຕົ້ນໄມ້ຂອງພຣະຜູ້ເປັນເຈົ້າຊົງປູກໄວ້
ກໍໄດ້ຮັບນໍ້າຝົນອັນອຸດົມສົມບູນ.
17 ໃນທີ່ນັ້ນຝູງນົກໄດ້ເຮັດຮັງຂອງມັນ
ເປັນຮັງນົກຍາງທີ່ຢູ່ເທິງຕົ້ນສົນ.
18 ສ່ວນເຍືອງກໍຢູ່ເທິງພູສູງສຸດ
ແລະຝູງກະຕ່າຍກໍລີ້ຢູ່ໜ້າຜາສາດນັ້ນ.

19 ພຣະອົງຊົງສ້າງດວງເດືອນ ເພື່ອໝາຍເດືອນ ແລະປີ
ແລະສ້າງຕາເວັນ ເພື່ອໃຫ້ຮູ້ເວລາຕົກຂອງມັນ.
20 ພຣະອົງຊົງສ້າງກາງຄືນ
ແລະໃນຕອນກາງຄືນ ສັດປ່າໄດ້ອອກມາ.
21 ຝ່າຍສິງໜຸ່ມກໍຮ້ອງຄາງເວລາອອກຊອກຫາກິນ
ແລະຊອກຫາອາຫານທີ່ພຣະເຈົ້າຊົງປະທານໃຫ້ແກ່ມັນ.
22 ເມື່ອຕາເວັນຂຶ້ນພວກມັນກັບຄືນໄປ
ແລະນອນໝອບຢູ່ໃນຖໍ້າຂອງມັນ.
23 ສ່ວນມະນຸດກໍອອກໄປເຮັດວຽກຂອງຕົນ
ແລະເຮັດວຽກຈົນຮອດຄໍ່າ.

24 ຂ້າແດ່ພຣະຜູ້ເປັນເຈົ້າພຣະອົງຊົງສ້າງຫລາຍສິ່ງ
ພຣະອົງຊົງສ້າງສິ່ງເຫລົ່ານີ້ຢ່າງສະຫລາດຮອບຄອບ
ແຜ່ນດິນໂລກນີ້ເຕັມໄປດ້ວຍສິ່ງທີ່ພຣະອົງຊົງສ້າງມາ.
25 ມີມະຫາສະໝຸດກວ້າງໃຫຍ່
ຊຶ່ງໃນບ່ອນນີ້ມີທັງສັດໃຫຍ່ ແລະສັດນ້ອຍ
ທີ່ພຣະອົງຊົງສ້າງອາໄສຢູ່ນັບບໍ່ຖ້ວນ.
26 ເຮືອກໍແລ່ນໄປມາ
ແລະເງືອກຊຶ່ງເປັນສັດໃຫຍ່ທີ່ພຣະອົງຊົງສ້າງໄວ້ກໍຫລິ້ນຢູ່ທີ່ນັ້ນ.

27 ສັດເຫລົ່ານັ້ນອາໄສພຣະອົງ
ພວກມັນຄອງຖ້າອາຫານຈາກພຣະອົງໃນຍາມຕ້ອງການ.
28 ເມື່ອພຣະອົງຊົງປະທານອາຫານໃຫ້ກິນ
ພວກມັນກໍກິນຢ່າງພໍໃຈ.
29 ເວລາພຣະອົງເຊື່ອງພຣະພັກຂອງພຣະອົງ ພວກມັນກໍຢ້ານກົວ
ເມື່ອພຣະອົງຖອດເອົາລົມຫາຍໃຈຄືນໄປ ພວກມັນຕ້ອງຕາຍ
ແລະກັບຄືນໄປໃນແຜ່ນດິນບ່ອນເກົ່າທີ່ມັນມາແຕ່ກ່ອນ.
30 ແຕ່ເມື່ອພຣະອົງຊົງປະທານລົມຫາຍໃຈແກ່ພວກມັນ ພວກມັນກໍມີຊີວິດຢູ່
ພຣະອົງຊົງປະທານຊີວິດໃໝ່ແກ່ແຜ່ນດິນໂລກ.

31 ຂໍໃຫ້ພຣະລັດສະໝີຂອງພຣະຜູ້ເປັນເຈົ້າຊົງມີຢູ່ຕະຫລອດໄປ
ຂໍໃຫ້ພຣະອົງຊົງມີຄວາມສຸກກັບສິ່ງທີ່ພຣະອົງຊົງສ້າງມາ.
32 ເມື່ອພຣະອົງຊົງຫອດພຣະເນດເຫິງແຜ່ນດິນໂລກ ມັນກໍສັ່ນສະເທືອນ
ເມື່ອພຣະອົງຊົງແຕະຕ້ອງພູທັງຫລາຍ
ຄວັນໄຟໄດ້ຫລັ່ງໄຫລອອກມາຈາກພູນັ້ນ.

33 ຂ້ານ້ອຍຈະຮ້ອງເພງຖວາຍແດ່ພຣະຜູ້ເປັນເຈົ້າ
ຕະຫລອດຊົ່ວຊີວິດຂອງຂ້ານ້ອຍ
ຂ້ານ້ອຍຈະຮ້ອງເພງສັນລະເສີນແດ່ພຣະຜູ້ເປັນເຈົ້າ
ຂອງຂ້ານ້ອຍຕະຫລອດຊົ່ວຊີວິດ.
34 ຂໍໃຫ້ພຣະອົງຊົງພໍພຣະໄທໃນບົດເພງຂອງຂ້ານ້ອຍ
ຍ້ອນພຣະອົງ ຂ້ານ້ອຍກໍຊົມຊື່ນຍິນດີ.
35 ຂໍໃຫ້ຄົນເຮັດຜິດຖືກທຳລາຍໝົດຈາກແຜ່ນດິນນີ້
ຂໍຢ່າໃຫ້ມີຄົນຊົ່ວຊ້າອີກຕໍ່ໄປ
ຈິດວິນຍານຂອງຂ້ານ້ອຍເອີຍ ຈົ່ງສັນລະເສີນພຣະຜູ້ເປັນເຈົ້າ
ຈົ່ງສັນລະເສີນພຣະຜູ້ເປັນເຈົ້າ.

# ບົດທີ 105

## ການຕັກເຕືອນໃຫ້ສັນລະເສີນພຣະເຈົ້າ

1 ໂອ ຈົ່ງໂມທະນາຂອບພຣະຄຸນພຣະຜູ້ເປັນເຈົ້າ ຈົ່ງຮ້ອງທູນອອກພຣະນາມພຣະອົງ
ຈົ່ງໃຫ້ບັນດາພຣະລາຊະກິດຂອງພຣະອົງປະກົດແຈ້ງແກ່ຊົນຊາດທັງຫລາຍ
2 ຈົ່ງຮ້ອງເພງຖວາຍພຣະອົງ ຮ້ອງເພງສັນລະເສີນຖວາຍພຣະອົງ
ຈົ່ງເວົ້າເຖິງການອັດສະຈັນທັງໝົດຂອງພຣະອົງ
3 ຈົ່ງອວດພຣະນາມບໍລິສຸດຂອງພຣະອົງ
ໃຫ້ຈິດໃຈຂອງບັນດາຜູ້ທີ່ສະແຫວງຫາພຣະຜູ້ເປັນເຈົ້າຊົມຊື່ນຍິນດີ
4 ຈົ່ງສະແຫວງຫາພຣະຜູ້ເປັນເຈົ້າ ແລະພຣະກຳລັງຂອງພຣະອົງ
ສະແຫວງຫາພຣະພັກຂອງພຣະອົງເລື້ອຍໆໄປ
5 ຈົ່ງລະນຶກເຖິງການອັດສະຈັນຊຶ່ງພຣະອົງຊົງກະທຳ
ການອັດສະຈັນ ແລະຄຳພິພາກສາແຫ່ງພຣະໂອດຂອງພຣະອົງ
6 ໂອ ເຊື້ອສາຍຂອງອັບຣາຮາມຜູ້ຮັບໃຊ້ຂອງພຣະອົງ
ເຊື້ອສາຍຂອງຢາໂຄບຜູ້ເລືອກສັນຂອງພຣະອົງ

7 ພຣະອົງຄືພຣະຜູ້ເປັນເຈົ້າພຣະເຈົ້າຂອງເຮົາ
ຄຳພິພາກສາຂອງພຣະອົງຢູ່ທົ່ວໄປໃນແຜ່ນດິນໂລກ
8 ພຣະອົງຈົດຈຳຄຳໝັ້ນສັນຍາຂອງພຣະອົງຢູ່ເປັນນິດ
ຄືພຣະທຳທີ່ພຣະອົງບັນຊາໄວ້ຕະຫລອດໜຶ່ງພັນຊົ່ວອາຍຸ

## ພຣະເຈົ້າໄດ້ຊ່ວຍພວກບັນພະບູລຸດແຫ່ງອິສຣາເອນ

9 ຄືຄຳໝັ້ນສັນຍາຊຶ່ງພຣະອົງໄດ້ໃຫ້ໄວ້ກັບອັບຣາຮາມ
ຄຳປະຕິຍານຊຶ່ງເຮັດໄວ້ກັບອີຊາກ
10 ຊຶ່ງພຣະອົງຢືນຢັນອີກກັບຢາໂຄບໃຫ້ເປັນພຣະບັນຍັດ

ແລະແກ່ອິສຣາເອນ ໃຫ້ເປັນຄຳໝັ້ນສັນຍານິລັນດອນ
11 ວ່າ "ເຮົາຈະໃຫ້ແຜ່ນດິນ ການາອານ ແກ່ເຈົ້າ
ເປັນສ່ວນມໍລະດົກຂອງເຈົ້າທັງຫລາຍ"

12 ເມື່ອພວກເຂົາຍັງມີຄົນຈຳນວນນ້ອຍ ຈຳນວນນ້ອຍອີ່ຫລີ
ຍັງເປັນແຕ່ຄົນທີ່ອາໄສຢູ່ໃນນັ້ນ
13 ພະເນຈອນໄປຈາກປະຊາຊາດນີ້ຫາປະຊາຊາດນັ້ນ
ຈາກລາຊະອານາຈັກນີ້ຫາອີກຊົນຊາດໜຶ່ງ
14 ພຣະອົງບໍ່ໄດ້ຍອມໃຫ້ຜູ້ໃດບີບບັງຄັບພວກເຂົາ
ພຣະອົງນາບຂູ່ກະສັດຫລາຍອົງໂດຍເຫັນແກ່ພວກເຂົາ
15 ວ່າ "ຢ່າແຕະຕ້ອງບັນດາຜູ້ທີ່ເຮົາເຈີມໄວ້
ຢ່າເຮັດອັນຕະລາຍແກ່ຜູ້ພະຍາກອນທັງຫລາຍຂອງເຮົາ"

16 ເມື່ອພຣະອົງຊົງເອີ້ນການອຶດອາຫານໃຫ້ເກີດຂຶ້ນທີ່ແຜ່ນດິນ
ແລະທຳລາຍອາຫານທີ່ບຳລຸງຊີວິດໝົດ
17 ພຣະອົງໃຊ້ຊາຍຄົນໜຶ່ງໄປກ່ອນໜ້າພວກເຂົາ ຄືໂຢເຊັບ
ຊຶ່ງຖືກຂາຍໄປເປັນຂ້າທາດ
18 ຕີນຂອງລາວເຈັບຊໍ້າດ້ວຍໂສ້ ຕົວລາວເຂົ້າຢູ່ໃນປອກເຫລັກ
19 ຈົນກວ່າສິ່ງທີ່ລາວບອກໄດ້ບັງເກີດຂຶ້ນ
ພຣະທຳຂອງ ພຣະຜູ້ເປັນເຈົ້າ ທົດສອບລາວ
20 ກະສັດກໍໃຊ້ໃຫ້ໄປປ່ອຍຕົວລາວ
ຜູ້ປົກຄອງຂອງຊົນຊາດທັງຫລາຍໄດ້ປ່ອຍລາວເປັນອິດສະຫລະ
21 ກະສັດຕັ້ງລາວໃຫ້ເປັນເຈົ້ານາຍເໜືອວັງຂອງພຣະອົງ
ເປັນຜູ້ປົກຄອງກຳມະສິດທັງປວງຂອງພຣະອົງ
22 ໃຫ້ຜູກມັດເຈົ້ານາຍຂອງພຣະອົງຕາມໃຈມັກ
ແລະສອນສະຕິປັນຍາແກ່ຜູ້ອາວຸໂສຂອງພຣະອົງ

23 ແລ້ວ ອິສຣາເອນ ໄດ້ມາທີ່ ເອຢິບ ຢາໂຄບ ໄດ້ອາໄສຢູ່ໃນແຜ່ນດິນຂອງ ຮາມ
24 ແລະ ພຣະເຈົ້າ ເຮັດໃຫ້ປະຊາຊົນຂອງພຣະອົງມີລູກດົກ
ແລະເຮັດໃຫ້ເຂົາແຂງແຮງກວ່າສັດຕູຂອງພວກເຂົາ
25 ພຣະອົງຊົງຫັນໃຈພວກເຂົາເຫລົ່ານັ້ນໃຫ້ກຽດຊັງປະຊາຊົນຂອງພຣະອົງ
ໃຫ້ໃຊ້ກົນອຸບາຍແກ່ຜູ້ຮັບໃຊ້ຂອງພຣະອົງ
26 ພຣະອົງໃຊ້ ໂມເຊ ຜູ້ຮັບໃຊ້ຂອງພຣະອົງ ແລະ ອາໂຣນ ຜູ້ທີ່ພຣະອົງເລືອກໄວ້
27 ພວກເຂົາທັງສອງກະທຳໝາຍສຳຄັນທ່າມກາງພວກເຂົາທັງຫລາຍ
ເຮັດການອັດສະຈັນໃນແຜ່ນດິນຂອງ ຮາມ

28 ພຣະອົງໃຊ້ຄວາມມືດມາ ເຮັດໃຫ້ແຜ່ນດິນມືດ
ພວກເຂົາທັງຫລາຍບໍ່ໄດ້ກະບົດຕໍ່ພຣະທຳຂອງພຣະອົງ
29 ພຣະອົງເຮັດໃຫ້ນ້ຳກາຍເປັນເລືອດ ແລະໃຫ້ປາຂອງພວກເຂົາຕາຍ
30 ກົບແຫ່ກັນມາເປັນຝູງໃຫຍ່ທີ່ແຜ່ນດິນຂອງພວກເຂົາ
ແມ່ນແຕ່ຫ້ອງໃນຂອງກະສັດຂອງພວກເຂົາກໍມີ
31 ພຣະອົງກ່າວ ແລະຝູງເຫລືອບກໍມາ ແລະລິ້ນມີໄປທົ່ວໃນແຜ່ນດິນຂອງພວກເຂົາ
32 ພຣະອົງປະທານລູກເຫັບແກ່ພວກເຂົາແທນຝົນ
ແລະໄຟໄໝ້ທົ່ວແຜ່ນດິນຂອງພວກເຂົາ
33 ພຣະອົງຊົງລົ້ມເຄືອອະງຸ່ນ ແລະຕົ້ນເດື່ອຂອງພວກເຂົາ
ແລະຟາດຕົ້ນໄມ້ໃນປະເທດຂອງພວກເຂົາໃຫ້ຫັກ
34 ພຣະອົງກ່າວ ແລະຕັກແຕນກໍມາ ແລະຕັກແຕນມານັບບໍ່ຖ້ວນ
35 ມາກິນພືດໃນແຜ່ນດິນຂອງພວກເຂົາໝົດ ແລະກິນຜົນແຫ່ງດິນຂອງພວກເຂົາໝົດ
36 ພຣະອົງສັງຫານບັນດາລູກຫົວປີໃນແຜ່ນດິນຂອງພວກເຂົາ
ຄືຜົນແລກແຫ່ງກຳລັງທັງໝົດຂອງພວກເຂົາ

37 ແລ້ວພຣະອົງນຳອິສຣາເອນອອກໄປພ້ອມກັບເງິນແລະທອງຄຳ
ແລະບໍ່ມີຈັກຄົນໜຶ່ງໃນຕະກູນຂອງພຣະອົງທີ່ອ່ອນແອ
38 ເມື່ອພວກເຂົາຫວິດຈາກໄປເອຢິບກໍຍິນດີ
ເພາະຄວາມໂກດຮ້າຍຕໍ່ອິສຣາເອນໄດ້ຕົກຢູ່ເທິງພວກເຂົາ
39 ພຣະອົງກາງເມກເປັນເຄື່ອງກຳບັງ
ແລະໄຟໃຫ້ຄວາມສະຫວ່າງເວລາກາງຄືນ
40 ປະຊາຊົນຮ້ອງຂໍ ແລະພຣະອົງນຳນົກຊຸ້ມມາ
ແລະໃຫ້ພວກເຂົາອີ່ມໃຈດ້ວຍອາຫານຈາກຟ້າສະຫວັນ
41 ພຣະອົງເປີດຫີນ ແລະນ້ຳກໍໄຫລອອກມາ
ມັນໄຫລພຸ່ງໄປເປັນແມ່ນ້ຳໃນຖິ່ນແຫ້ງແລ້ງກັນດານ
42 ເພາະພຣະອົງລະນຶກເຖິງພຣະສັນຍາບໍລິສຸດຂອງພຣະອົງ
ແລະອັບຣາຮາມຜູ້ຮັບໃຊ້ຂອງພຣະອົງ
43 ພຣະອົງຈຶ່ງນຳປະຊາຊົນຂອງພຣະອົງອອກມາດ້ວຍຄວາມຊື່ນບານ
ນຳຜູ້ທີ່ຊົງເລືອກສັນໄວ້ນັ້ນດ້ວຍຄວາມເບີກບານໃຈ
44 ພຣະອົງປະທານແຜ່ນດິນຂອງບັນດາປະຊາຊາດໃຫ້ແກ່ພວກເຂົາ
ແລະພວກເຂົາໄດ້ຜົນງານຂອງຊາດທັງຫລາຍມາເປັນກຳມະສິດ

45 ເພື່ອພວກເຂົາຈະຮັກສາກົດເກນຂອງພຣະອົງ
ແລະຖືປະຕິບັດພຣະບັນຍັດຂອງພຣະອົງ ຈົ່ງສັນລະເສີນພຣະຜູ້ເປັນເຈົ້າເຖີດ

# ບົດທີ 106

## ການກະບົດຂອງປະຊາຊົນ ແລະບັນດາພຣະເມດຕາຂອງພຣະເຈົ້າ

1 ຈົ່ງສັນລະເສີນພຣະຜູ້ເປັນເຈົ້າເຖີດ ໂອ ຈົ່ງໂມທະນາຂອບພຣະຄຸນພຣະຜູ້ເປັນເຈົ້າ
ເພາະພຣະອົງປະເສີດ ເພາະຄວາມເມດຕາຂອງພຣະອົງດຳລົງເປັນນິດ
2 ຜູ້ໃດຈະພັນລະນາເຖິງພຣະລາຊະກິດອັນຊົງລິດອຳນາດຂອງພຣະຜູ້ເປັນເຈົ້າ
ຜູ້ໃດຈະສະແດງເຖິງພຣະກຽດຂອງພຣະອົງຢ່າງຄົບຖ້ວນໄດ້
3 ບັນດາຜູ້ທີ່ປະພຶດຄວາມຍຸດຕິທຳກໍເປັນສຸກ
ແລະຜູ້ທີ່ປະຕິບັດຄວາມຊອບທຳຕະຫລອດເວລາ

4 ຂ້າແດ່ພຣະຜູ້ເປັນເຈົ້າຂໍລະນຶກເຖິງຂ້ານ້ອຍດ້ວຍຄວາມຍິນດີ
ຊຶ່ງພຣະອົງມີຕໍ່ປະຊາຊົນຂອງພຣະອົງ
ຂໍປະທານຄວາມພົ້ນຂອງພຣະອົງໃຫ້ແກ່ຂ້ານ້ອຍ
5 ເພື່ອຂ້ານ້ອຍຈະເຫັນຄວາມຈະເລີນຮຸ່ງເຮືອງ
ຂອງບັນດາຜູ້ທີ່ຊົງເລືອກຂອງພຣະອົງ
ເພື່ອຂ້ານ້ອຍຈະຮ່ວມໃນຄວາມຍິນດີແຫ່ງປະຊາຊາດ
ຂອງພຣະອົງ ເພື່ອຂ້ານ້ອຍຈະໄດ້ຮ່ວມກັບມໍລະດົກຂອງພຣະອົງ

6 ທັງຂ້ານ້ອຍທັງຫລາຍ
ແລະບັນພະບູລຸດຂອງຂ້ານ້ອຍໄດ້ເຮັດບາບແລ້ວ
ຂ້ານ້ອຍທັງຫລາຍໄດ້ເຮັດຄວາມຊົ່ວຊ້າ
ຂ້ານ້ອຍທັງຫລາຍໄດ້ປະພຶດຢ່າງຊົ່ວຮ້າຍ
7 ບັນພະບູລຸດຂອງຂ້ານ້ອຍທັງຫລາຍເມື່ອເພິ່ນຢູ່
ໃນ ເອຢິບ ເພິ່ນບໍ່ໄດ້ເຂົ້າໃຈໃນການອັດສະຈັນຂອງພຣະອົງ
ເພິ່ນບໍ່ໄດ້ລະນຶກເຖິງຄວາມເມດຕາອັນອຸດົມຂອງພຣະອົງ
ແຕ່ໄດ້ກະບົດຕໍ່ພຣະອົງຢູ່ທະເລແດງ

8 ເຖິງປານນັ້ນ ພຣະອົງຍັງຊ່ວຍເພິ່ນໃຫ້ລອດພົ້ນ
ເພາະເຫັນແກ່ພຣະນາມຂອງພຣະອົງ
ເພື່ອຈະໃຫ້ຮູ້ເຖິງລິດທານຸພາບຂອງພຣະອົງ
9 ພຣະອົງນາບຂູ່ທະເລແດງ ມັນກໍແຫ້ງໄປ
ແລະພຣະອົງນຳເພິ່ນຂ້າມບ່ອນເລິກຄືກັບຍ່າງຂ້າມຖິ່ນແຫ້ງແລ້ງກັນດານ
10 ພຣະອົງຈຶ່ງຊ່ວຍເພິ່ນໃຫ້ພົ້ນຈາກມືຂອງຜູ້ທີ່ກຽດຊັງເພິ່ນ
ແລະໄຖ່ເພິ່ນຈາກເງື້ອມມືຂອງສັດຕູ
11 ແລະນໍ້າຖ້ວມສັດຕູຂອງເພິ່ນ ພວກເຂົາບໍ່ເຫລືອຈັກຄົນດຽວ
12 ແລ້ວເພິ່ນເຊື່ອພຣະທຳຂອງພຣະອົງ ເພິ່ນຮ້ອງເພງສັນລະເສີນພຣະອົງ

13 ແຕ່ບໍ່ຊ້າເພິ່ນກໍລືມພຣະລາຊະກິດຂອງພຣະອົງ
ເພິ່ນບໍ່ຄອຍຖ້າຄຳປຶກສາຂອງພຣະອົງ
14 ແຕ່ໃນຖິ່ນແຫ້ງແລ້ງກັນດານນັ້ນ ເພິ່ນມີຄວາມຢຳເກງຢ່າງຮຸນແຮງ
ແລະໄດ້ທົດລອງ ພຣະເຈົ້າ ໃນທະເລຊາຍ
15 ພຣະອົງປະທານສິ່ງທີ່ເພິ່ນຂໍ
ແຕ່ໃຊ້ພະຍາດຈ່ອຍແຫ້ງມາທ່າມກາງຈິດໃຈເພິ່ນ

16 ເມື່ອຄົນໃນຄ້າຍອິດສາ ໂມເຊ ແລະ ອາໂຣນ ຜູ້ບໍລິສຸດຂອງ ພຣະຜູ້ເປັນເຈົ້າ
17 ພື້ນແຜ່ນດິນອ້າປາກກືນ ດາທານ ແລະທັບຄະນະ ອາບີຣາມ ເສຍ
18 ໄຟລະເບີດໃນຄະນະຂອງເພິ່ນ ແລະແປວໄຟເຜົາຄົນຊົ່ວ

19 ເພິ່ນໄດ້ສ້າງລູກງົວໃນ ໂຮເຣັບ ແລະນະມັດສະການຮູບເຄົາລົບ
20 ເພິ່ນຈຶ່ງເອົາສະຫງ່າລາສີຂອງ ພຣະເຈົ້າ ແລກກັບຮູບຂອງງົວທີ່ກິນຫຍ້າ
21 ເພິ່ນລືມ ພຣະເຈົ້າ ພຣະຜູ້ຊ່ອຍ ໃຫ້ພົ້ນຂອງເພິ່ນ
ຜູ້ຊົງກະທຳພຣະລາຊະກິດໃຫຍ່ຫລວງໃນ ເອຢິບ
22 ຊົງເຮັດການອັດສະຈັນໃນແຜ່ນດິນຂອງ ຮາມ
ແລະສິ່ງໜ້າຢ້ານກົວຢູ່ທະເລແດງ
23 ເພາະສະນັ້ນ ພຣະອົງກ່າວວ່າຈະທຳລາຍເພິ່ນ
ດີແຕ່ ໂມເຊ ຜູ້ຊົງເລືອກຂອງພຣະອົງໄດ້ມາຢືນເຝົ້າຄັດຄ້ານພຣະອົງ
ເພື່ອຫັນພຣະພິໂລດຂອງພຣະອົງໄປຈາກການທຳລາຍ

24 ແລ້ວເພິ່ນກໍໝິ່ນປະໝາດແຜ່ນດິນອັນອຸດົມສົມບູນນັ້ນ
ເພິ່ນບໍ່ເຊື່ອພຣະສັນຍາຂອງພຣະອົງ
25 ເພິ່ນຈົ່ມຢູ່ໃນເຕັນຂອງຕົນ ແລະບໍ່ຟັງພຣະສຸລະສຽງຂອງ ພຣະຜູ້ເປັນເຈົ້າ
26 ເພາະສະນັ້ນ ພຣະອົງຈຶ່ງຍົກພຣະຫັດຂອງພຣະອົງປະຕິຍານຕໍ່ເພິ່ນ
ວ່າຈະເຮັດໃຫ້ເພິ່ນລົ້ມຕາຍໃນຖິ່ນແຫ້ງແລ້ງກັນດານ
27 ແລະຈະກະຈາຍເຊື້ອສາຍຂອງເພິ່ນໄປທ່າມກາງປະຊາຊາດ
ຫວ່ານພວກເຂົາໄປທົ່ວປະເທດທັງຫລາຍ

28 ແລ້ວເພິ່ນກໍໄປຕິດພັນຢູ່ກັບ ພະບາອານ ແຫ່ງ ເມືອງ ເປໂອ
ແລະຮັບປະທານເຄື່ອງສັດບູຊາທີ່ບູຊາພະຕາຍ
29 ເພິ່ນຍົວະເຍົ້າພຣະອົງໃຫ້ໂກດຮ້າຍດ້ວຍການກະທຳຂອງຕົນ
ແລະພະຍາດລະບາດເກີດຂຶ້ນທ່າມກາງພວກເພິ່ນ
30 ແລ້ວ ຟີເນຮາດ ໄດ້ຢືນຂຶ້ນຈັດການລົງໂທດ ແລະພະຍາດລະບາດນັ້ນກໍຢຸດ
31 ທີ່ລາວເຮັດນັ້ນພຣະອົງນັບວ່າເປັນຄວາມຊອບທຳ
ແກ່ລາວຕະຫລອດທຸກຊົ່ວອາຍຸສືບຕໍ່ໄປເປັນນິດ

32 ພວກເພິ່ນເຮັດໃຫ້ພຣະອົງໂກດຮ້າຍຢູ່ນໍ້າແຫ່ງການໂຕ້ຖຽງ
ເພາະເລື່ອງຂອງພວກເພິ່ນນີ້ໂມເຊກໍເລີຍເສຍຫາຍດ້ວຍ
33 ເພາະພວກເພິ່ນເຮັດໃຫ້ຈິດໃຈຂອງໂມເຊຂົມຂື່ນ
ດັ່ງນັ້ນ ຮີມປາກຂອງລາວຈຶ່ງເວົ້າຖ້ອຍຄໍາໃຈຮ້າຍ

34 ເພິ່ນບໍ່ໄດ້ທໍາລາຍຊົນຊາດທັງຫລາຍຕາມທີ່ພຣະຜູ້ເປັນເຈົ້າບັນຊາເພິ່ນໄວ້
35 ແຕ່ໄດ້ປະປົນກັບປະຊາຊາດເຫລົ່ານັ້ນ
ແລະຫັນໄປເຮັດເໝືອນຢ່າງທີ່ພວກເຂົາເຮັດນັ້ນ
36 ເພິ່ນບົວລະບັດຮູບເຄົາລົບຂອງພວກເຂົາ ຊຶ່ງກາຍເປັນບ້ວງແຮ້ວສໍາລັບຕົນເອງ
37 ພວກເພິ່ນຂ້າລູກຊາຍ ແລະລູກຍິງຂອງຕົນ
ຖວາຍເປັນເຄື່ອງຖວາຍບູຊາແກ່ປີສາດ
38 ເພິ່ນຖອກເລືອດຜູ້ບໍ່ມີຄວາມຜິດອອກມາ
ຄືເລືອດລູກຊາຍລູກຍິງຂອງຕົນ
ຜູ້ຊຶ່ງເພິ່ນໄດ້ຂ້າເປັນເຄື່ອງຖວາຍບູຊາ
ແກ່ຮູບເຄົາລົບແຫ່ງການາອານ ແຜ່ນດິນກໍມີມົນທິນໄປດ້ວຍເລືອດ
39 ພວກເພິ່ນຈຶ່ງເປັນຄົນບໍ່ສະອາດຍ້ອນການກະທໍາຂອງຕົນ
ແລະປະພຶດເໝືອນຢ່າງໂສເພນີໃນການກະທໍານັ້ນ

40 ແລ້ວຄວາມໂກດຮ້າຍຂອງພຣະຜູ້ເປັນເຈົ້າກໍພຸ່ງຂຶ້ນຕໍ່ປະຊາຊົນຂອງພຣະອົງ
ແລະພຣະອົງຊັງກຽດຊັງມໍລະດົກຂອງພຣະອົງ
41 ພຣະອົງມອບພວກເພິ່ນໄວ້ໃນມືປະຊາຊາດຕ່າງໆ
ບັນດາຜູ້ທີ່ກຽດຊັງເພິ່ນ ຈຶ່ງປົກຄອງເໜືອພວກເພິ່ນ
42 ສັດຕູຂອງເພິ່ນໄດ້ບີບບັງຄັບພວກເພິ່ນ ແລະຕົກໄປຢູ່ໃຕ້ອໍານາດຂອງພວກເຂົາ
43 ພຣະອົງຊ່ວຍເພິ່ນໃຫ້ພົ້ນຫລາຍເທື່ອ
ແຕ່ພວກເພິ່ນມັກກະບົດໃນຈຸດປະສົງຂອງຕົນ
ແລະຖືກຢຽບລົງດ້ວຍຄວາມຊົ່ວຊ້າຂອງຕົນ

44 ເຖິງຢ່າງໃດ ເມື່ອພຣະອົງຮັບຟັງສຽງຮ້ອງທູນຂອງເພິ່ນ
ພຣະອົງສົນພຣະໄທໃນຄວາມທຸກໃຈຂອງພວກເພິ່ນ
45 ເພື່ອເຫັນແກ່ພວກເພິ່ນ ພຣະອົງລະນຶກເຖິງຄໍາໝັ້ນສັນຍາຂອງພຣະອົງ
ແລະຊົງພຣະກະລຸນາຕາມຄວາມເມດຕາອັນອຸດົມຂອງພຣະອົງ
46 ພຣະອົງໃຫ້ພວກເພິ່ນໄດ້ຮັບຄວາມອີດູຕົນຈາກບັນດາຜູ້
ທີ່ໄດ້ຍຶດພວກເພິ່ນໄປເປັນຊະເລີຍ

47 ຂ້າແດ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງຂ້ານ້ອຍທັງຫລາຍ
ຂໍຊ່ວຍຂ້ານ້ອຍທັງຫລາຍໃຫ້ລອດພົ້ນ

ແລະຂໍລວບລວມຂ້ານ້ອຍທັງຫລາຍຈາກທ່າມກາງປະຊາຊາດຕ່າງໆ
ເພື່ອຂ້ານ້ອຍທັງຫລາຍຈະໂມທະນາ
ຂອບພຣະຄຸນພຣະນາມບໍລິສຸດຂອງພຣະອົງ
ແລະປິຕິຍິນດີໃນການສັນລະເສີນພຣະອົງ

48 ຈົ່ງຖວາຍສາທຸການແດ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງອິສຣາເອນ
ແຕ່ນິລັນດອນຈົນເຖິງນິລັນດອນ ແລະຂໍປະຊາຊົນທັງປວງກ່າວວ່າ
"ອາແມນ" ຈົ່ງສັນລະເສີນພຣະຜູ້ເປັນເຈົ້າເຖີດ

# ບົດທີ 107

## ການສັນລະເສີນພຣະຄຸນຂອງພຣະເຈົ້າ

1 ຈົ່ງຂອບພຣະຄຸນພຣະຜູ້ເປັນເຈົ້າເພາະຄວາມດີຂອງພຣະອົງ
ຄວາມຮັກຂອງພຣະອົງຊົງມີຕະຫລອດໄປ.
2 ບັນດາຜູ້ທີ່ພຣະອົງຊົງຊ່ອຍໃຫ້ພົ້ນ
ຈົ່ງຮ່ວມກັນສັນລະເສີນພຣະຜູ້ເປັນເຈົ້າ
ເພາະພຣະອົງໄດ້ຊົງຊ່ອຍຊີວິດຂອງພວກເຂົາອອກຈາກເງື້ອມມືຂອງສັດຕູ.
3 ແລະນຳພວກເຂົາອອກມາຈາກຕ່າງປະເທດ
ຈາກທິດຕາເວັນອອກ ແລະທິດຕາເວັນຕົກ ຈາກທິດເໜືອ ແລະທິດໃຕ້.

4 ສ່ວນບາງຄົນທີ່ທ່ຽວໄປມາໃນຖິ່ນແຫ້ງແລ້ງກັນດານ
ກໍບໍ່ອາດພົບພໍ້ຫົນທາງທີ່ຈະເຂົ້າໄປຢູ່ໃນເມືອງໄດ້.
5 ພວກເຂົາຫິວເຂົ້າຫິວນໍ້າ
ແລະສູນເສຍຄວາມຫວັງທຸກຢ່າງ.
6 ເມື່ອມີຄວາມທຸກຍາກລຳບາກ ພວກເຂົາໄດ້ຮ້ອງຫາພຣະຜູ້ເປັນເຈົ້າ
ພຣະອົງກໍໄດ້ຊົງຊ່ອຍໃຫ້ພົ້ນຈາກຄວາມທຸກໂສກ.
7 ພຣະອົງຊົງນຳພວກເຂົາມຸ່ງໜ້າຕົງໄປອາໄສຢູ່ໃນເມືອງ.
8 ພວກເຂົາຕ້ອງຂອບພຣະຄຸນພຣະຜູ້ເປັນເຈົ້າ
ຍ້ອນຄວາມຮັກອັນໝັ້ນຄົງຂອງພຣະອົງ
ແລະຍ້ອນການອັດສະຈັນທີ່ພຣະອົງຊົງກະທຳສຳລັບພວກເຂົາ.
9 ພຣະອົງຊົງເຮັດໃຫ້ຜູ້ຫິວນໍ້າອີ່ມຢ່າງພໍໃຈ
ແລະຜູ້ທີ່ຫິວເຂົ້າກໍອີ່ມດ້ວຍຂອງດີ.

10 ບາງຄົນທີ່ເປັນນັກໂທດຢູ່ໃນຄວາມໂສກເສົ້າ ແລະມືດມົນ
ທີ່ຖືກມັດດ້ວຍໂສ້ຢ່າງທໍລະມານ.
11 ເພາະວ່າພວກເຂົາໄດ້ກະບົດຕໍ່ສູ້ຄຳສັ່ງຂອງພຣະເຈົ້າອົງສູງສຸດ

ແລະປະຕິເສດຄຳສັ່ງສອນຂອງພຣະອົງ.
12 ພວກເຂົາອິດເມື່ອຍຍ້ອນວຽກໜັກ
ພວກເຂົາລົ້ມລົງ ແລະບໍ່ມີຜູ້ໃດຊ່ອຍພວກເຂົາ.
13 ເມື່ອມີຄວາມທຸກຍາກລຳບາກ ພວກເຂົາໄດ້ຮ້ອງຫາ ພຣະຜູ້ເປັນເຈົ້າ
ພຣະອົງໄດ້ຊົງຊ່ອຍພວກເຂົາໃຫ້ພົ້ນຈາກຄວາມທຸກໂສກ.
14 ພຣະອົງຊົງໃຫ້ພວກເຂົາພົ້ນຈາກຄວາມໂສກເສົ້າແລະຄວາມມືດມົວ
ແລະຊົງຕັດໂສ້ມັດຕົວຂອງພວກເຂົາອອກ.
15 ພວກເຂົາຕ້ອງຂອບພຣະຄຸນ ພຣະຜູ້ເປັນເຈົ້າ
ຍ້ອນຄວາມຮັກອັນໝັ້ນຄົງຂອງພຣະອົງ
ແລະຍ້ອນການອັດສະຈັນທີ່ພຣະອົງຊົງກະທຳສຳລັບພວກເຂົາ.
16 ພຣະອົງຊົງມ້າງເພປະຕູທອງລົງ
ແລະຕັດກົງເຫລັກໃຫ້ຂາດອອກ.

17 ບາງຄົນກໍເຈັບໄຂ້ຍ້ອນຄວາມຜິດຂອງພວກເຂົາ
ແລະທຸກທໍລະມານຍ້ອນຄວາມຊົ່ວຂອງຕົນ.
18 ພວກເຂົາອ່ອນແຮງຈົນບໍ່ຢາກກິນເຂົ້າ
ພວກເຂົາໄດ້ຢູ່ໃກ້ໆກັບຄວາມຕາຍ.
19 ເມື່ອມີຄວາມທຸກລຳບາກ ພວກເຂົາໄດ້ຮ້ອງຫາ ພຣະຜູ້ເປັນເຈົ້າ
ພຣະອົງກໍໄດ້ຊົງຊ່ອຍພວກເຂົາໃຫ້ພົ້ນຈາກຄວາມທຸກໂສກ.
20 ພວກເຂົາດີຈາກພະຍາດດ້ວຍພຣະຄຳຂອງພຣະອົງ
ແລະພຣະອົງຊົງຊ່ອຍພວກເຂົາບໍ່ໃຫ້ຕາຍ.
21 ພວກເຂົາຕ້ອງຂອບພຣະຄຸນ ພຣະຜູ້ເປັນເຈົ້າ
ຍ້ອນຄວາມຮັກອັນໝັ້ນຄົງຂອງພຣະອົງ
ແລະຍ້ອນການອັດສະຈັນທີ່ພຣະອົງຊົງກະທຳສຳລັບພວກເຂົາ.
22 ພວກເຂົາຕ້ອງຂອບພຣະຄຸນພຣະອົງດ້ວຍການຖວາຍບູຊາ
ແລະບົດເພງອັນມ່ວນຊື່ນອັນກ່າວເຖິງທຸກສິ່ງທີ່ພຣະອົງຊົງກະທຳ.

23 ບາງຄົນກໍຂີ່ເຮືອແລ່ນໄປມາຢູ່ເທິງມະຫາສະໝຸດ
ເພື່ອຫາລ້ຽງຊີບ.
24 ພວກເຂົາໄດ້ເຫັນສິ່ງທີ່ ພຣະຜູ້ເປັນເຈົ້າ ຊົງກະທຳ
ຄືກິດຈະການອັນອັດສະຈັນຂອງພຣະອົງຢູ່ເທິງທະເລ.
25 ເມື່ອພຣະອົງຊົງສັ່ງ ລົມອັນແຮງກ້າກໍເລີ່ມພັດ
ແລະເຮັດໃຫ້ຄື້ນນ້ຳທະເລຟອງຂຶ້ນ.
26 ເຮັດໃຫ້ຖືກໂຍນຂຶ້ນໂຍນລົງຕາມລະດັບນ້ຳ
ໃນເວລາອັນຕະລາຍເຊັ່ນນີ້ ມະນຸດໄດ້ຂາດຄວາມກ້າຫານ.

27 ພວກເຂົາໄດ້ເຕະສະດຸດ ແລະຍ່າງໂຊເຊຄືຄົນເມົາເຫລົ້າ
ຄວາມຊຳນານຂອງພວກເຂົາກໍຊ່ອຍຫຍັງບໍ່ໄດ້.
28 ເມື່ອມີຄວາມທຸກລຳບາກ ພວກເຂົາໄດ້ຮ້ອງຫາພຣະຜູ້ເປັນເຈົ້າ
ພຣະອົງກໍໄດ້ຊົງຊ່ອຍພວກເຂົາໃຫ້ພົ້ນຈາກຄວາມທຸກໂສກ.
29 ພຣະອົງຊົງເຮັດໃຫ້ພະຍຸງຽບສະຫງັດ
ແລະຟອງທະເລມິດງຽບລົງ.
30 ພວກເຂົາຕ່າງກໍພາກັນດີໃຈ
ແລ້ວພຣະອົງຊົງນຳພວກເຂົາມາຮອດທ່າເຮືອຕາມຈຸດໝາຍປາຍທາງ.
31 ພວກເຂົາຕ້ອງຂອບພຣະຄຸນພຣະຜູ້ເປັນເຈົ້າ
ຍ້ອນຄວາມຮັກອັນໝັ້ນຄົງຂອງພຣະອົງ
ແລະຍ້ອນການອັດສະຈັນທີ່ພຣະອົງຊົງກະທຳສຳລັບພວກເຂົາ.
32 ພວກເຂົາຕ້ອງປະກາດຄວາມຍິ່ງໃຫຍ່ຂອງພຣະອົງຕໍ່ຊຸມນຸມຊົນ
ແລະສັນລະເສີນພຣະອົງຕໍ່ກອງປະຊຸມພວກເຖົ້າແກ່.

33 ພຣະຜູ້ເປັນເຈົ້າຊົງເຮັດໃຫ້ແມ່ນໍ້າຂອດແຫ້ງລົງ
ແລະຊົງໃຫ້ບໍ່ນໍ້າເຊົາໄຫລ.
34 ພຣະອົງໄດ້ຊົງເຮັດໃຫ້ດິນທີ່ອຸດົມສົມບູນ
ກາຍເປັນດິນເຄັມ ແລະໃຊ້ການບໍ່ໄດ້
ເພາະຄວາມຊົ່ວຊ້າຂອງຜູ້ທີ່ອາໄສຢູ່ເທິງດິນນັ້ນ.
35 ພຣະອົງຊົງປ່ຽນແປງຖິ່ນແຫ້ງແລ້ງກັນດານໃຫ້ມີໜອງນໍ້າ
ແລະຖິ່ນທີ່ແຫ້ງແລ້ງໃຫ້ມີນໍ້າບໍ່.
36 ພຣະອົງຊົງໃຫ້ຜູ້ທີ່ຫິວເຂົ້າອາໄສຢູ່ທີ່ນັ້ນ
ແລະພວກເຂົາໄດ້ສ້າງເມືອງອາໄສຢູ່.
37 ພວກເຂົາໄດ້ຫວ່ານກ້າດຳນາ ແລະປູກຕົ້ນອະງຸ່ນ
ຊຶ່ງໄດ້ເກີດໝາກຢ່າງອຸດົມສົມບູນ.
38 ພຣະອົງຊົງອວຍພຣະພອນແກ່ໄພ່ພົນຂອງພຣະອົງໃຫ້ມີລູກຫລາຍຄົນ
ແລະຊົງລ້ຽງຮັກສາຝູງສັດຂອງພວກເຂົາບໍ່ໃຫ້ຫລຸດນ້ອຍຖອຍລົງ.

39 ເມື່ອໄພ່ພົນຂອງພຣະເຈົ້າໄດ້ພ່າຍແພ້ ແລະໄດ້ຮັບຄວາມອັບອາຍ
ຍ້ອນຖືກຂົ່ມເຫັງຢ່າງໂຫດຮ້າຍ ແລະການທໍລະມານ.
40 ພຣະອົງບໍ່ຊົງພໍພຣະໄທຜູ້ທີ່ຂົ່ມເຫັງພວກເຂົາ
ແລະຊົງໃຫ້ພວກເຂົາທ່ຽວໄປມາໃນຖິ່ນແຫ້ງແລ້ງກັນດານ.
41 ແຕ່ວ່າພຣະອົງຊົງຊ່ອຍຄົນຈົນໃຫ້ພົ້ນຈາກຄວາມທຸກຍາກລຳບາກ
ແລະຊົງໃຫ້ພວກເຂົາມີຄອບຄົວເພີ່ມທະວີຂຶ້ນເໝືອນສັດໃນຝູງ.
42 ເມື່ອຄົນຊອບທຳເຫັນເຫດການຢ່າງນີ້ກໍມີຄວາມຍິນດີ

ແຕ່ວ່າພວກຄົນຊົ່ວຮ້າຍທັງປວງກໍມິດງຽບຢູ່.

43 ຂໍໃຫ້ຜູ້ທີ່ສະຫລາດຄິດເຖິງສິ່ງເຫລົ່ານີ້
ຂໍໃຫ້ພວກເຂົາຮັບຮູ້ເຖິງຄວາມຮັກອັນໝັ້ນຄົງຂອງພຣະອົງ.

# ບົດທີ 108

## ດາວິດສັນລະເສີນພຣະເຈົ້າ

*ບົດເພງ ຫລືເພງສັນລະເສີນຂອງດາວິດ*

1 ຂ້າແດ່ພຣະເຈົ້າ ຈິດໃຈຂອງຂ້ານ້ອຍໝັ້ນຄົງ ຂ້ານ້ອຍຈະຮ້ອງເພງ
ແລະຮ້ອງເພງສັນລະເສີນດ້ວຍຈິດໃຈຂອງຂ້ານ້ອຍ
2 ພິນໃຫຍ່ ແລະພິນຄູ່ເອີຍ ຈົ່ງຕື່ນເຖີດ ຂ້ານ້ອຍຈະປຸກຮຸ່ງອາລຸນ
3 ຂ້າແດ່ພຣະຜູ້ເປັນເຈົ້າ ຂ້ານ້ອຍຈະສັນລະເສີນພຣະອົງທ່າມກາງປະຊາຊາດ
ຂ້ານ້ອຍຈະຮ້ອງເພງສັນລະເສີນພຣະອົງທ່າມກາງຊົນຊາດທັງຫລາຍ
4 ເພາະຄວາມເມດຕາຂອງພຣະອົງຍິ່ງໃຫຍ່ເໜືອຟ້າສະຫວັນ
ຄວາມຈິງຂອງພຣະອົງສູງເຖິງເມກ

## ການທູນຂໍຄວາມຊ່ວຍເຫລືອຈາກພຣະເຈົ້າ

5 ຂ້າແດ່ພຣະເຈົ້າ ຂໍເປັນທີ່ເຊີດຊູເໜືອຟ້າສະຫວັນ
ຂໍສະຫງ່າລາສີຂອງພຣະອົງຢູ່ເໜືອທົ່ວແຜ່ນດິນໂລກ
6 ຂໍຊ່ວຍໃຫ້ລອດພົ້ນໂດຍພຣະຫັດຂວາຂອງພຣະອົງ ແລະຕອບຂ້ານ້ອຍ
ເພື່ອວ່າຜູ້ທີ່ພຣະອົງຮັກຈະໄດ້ຮັບການຊ່ວຍໃຫ້ພົ້ນ

7 ພຣະເຈົ້າໄດ້ກ່າວດ້ວຍຄວາມບໍລິສຸດຂອງພຣະອົງວ່າ “ເຮົາຈະປິຕິຍິນດີ
ເຮົາຈະແບ່ງເມືອງ ເຊເຄັມ ແລະແບ່ງຮ່ອມພູເຂົາເມືອງ ສຸກໂກດ ອອກ
8 ກີເລອາດ ເປັນຂອງເຮົາມານາເຊ ເປັນຂອງເຮົາ
ເອຟຣາຢິມ ເປັນເຄື່ອງປ້ອງກັນຫົວຂອງເຮົາ
ຢູດາ ເປັນຜູ້ປະກາດພຣະບັນຍັດຂອງເຮົາ
9 ໂມອາບ ເປັນອ່າງລ້າງຊໍາລະຂອງເຮົາ
ເຮົາຖິ້ມເກີບຂອງເຮົາລົງເທິງ ເອໂດມ
ເຮົາໂຫ່ຮ້ອງດ້ວຍຄວາມມີໄຊເໜືອ ຟີລິດສະຕິນ”

10 ຜູ້ໃດຈະນໍາຂ້ານ້ອຍເຂົ້າໄປໃນນະຄອນທີ່ມີປ້ອມ
ຜູ້ໃດຈະນໍາຂ້ານ້ອຍໄປຍັງ ເອໂດມ
11 ຂ້າແດ່ພຣະເຈົ້າ ພຣະອົງບໍ່ໄດ້ປະຖິ້ມຂ້ານ້ອຍທັງຫລາຍແລ້ວຫລື
ຂ້າແດ່ພຣະເຈົ້າ
ພຣະອົງບໍ່ອອກໄປກັບກອງທັບຂອງຂ້ານ້ອຍທັງຫລາຍແລ້ວບໍ

12 ຂໍປະທານຄວາມຊ່ວຍເຫລືອເພື່ອຕໍ່ຕ້ານຄວາມຫຍຸ້ງຍາກຕ່າງໆ
ເພາະຄວາມຊ່ວຍເຫລືອຂອງມະນຸດກໍບໍ່ມີຜົນຫຍັງ
13 ໂດຍພຣະເຈົ້າເອງ ຂ້ານ້ອຍທັງຫລາຍຈະປະຕິບັດຢ່າງເຂັ້ມແຂງ
ພຣະອົງເອງຈະເປັນຜູ້ຢຽບສັດຕູຂອງຂ້ານ້ອຍທັງຫລາຍລົງ

# ບົດທີ 109

## ດາວິດຈົ່ມເລື່ອງພວກສັດຕູທີ່ນິນທາເພິ່ນ

*ເຖິງຫົວໜ້ານັກຮ້ອງ ເພງສັນລະເສີນຂອງດາວິດ*

1 ຂ້າແດ່ພຣະເຈົ້າຜູ້ຊຶ່ງຂ້ານ້ອຍສັນລະເສີນ ຂໍຢ່າເສີຍ

2 ເພາະປາກຂອງຄົນຊົ່ວ
ແລະປາກຂອງຄົນຫລອກລວງອ້າໃສ່ຂ້ານ້ອຍຢູ່ແລ້ວ
ພວກເຂົາໄດ້ເວົ້າໃສ່ຮ້າຍຂ້ານ້ອຍດ້ວຍລີ້ນຂີ້ຕົວະ
3 ພວກເຂົາທັງຫລາຍອ້ອມຂ້ານ້ອຍໄວ້ດ້ວຍຖ້ອຍຄຳກຽດຊັງ
ແລະໂຈມຕີຂ້ານ້ອຍຢ່າງບໍ່ມີເຫດຜົນ
4 ພວກເຂົາເປັນພວກສັດຕູຕໍ່ຂ້ານ້ອຍແທນຄວາມຮັກຂອງຂ້ານ້ອຍ
ສ່ວນຂ້ານ້ອຍໄດ້ອະທິຖານເທົ່ານັ້ນ
5 ພວກເຂົາຕອບແທນຂ້ານ້ອຍດ້ວຍຄວາມຊົ່ວແທນຄວາມດີ
ແລະຄວາມກຽດຊັງແທນຄວາມຮັກຂອງຂ້ານ້ອຍ

6 ຂໍຕັ້ງຄົນຊົ່ວໃຫ້ຢູ່ເໜືອລາວ ແລະໃຫ້ຊາຕານຢືນຢູ່ທີ່ມືຂວາຂອງລາວ
7 ເມື່ອພິຈາລະນາຄະດີ ກໍໃຫ້ລາວປະກົດວ່າເປັນຜູ້ກະທຳຜິດ
ແລະໃຫ້ຄຳອະທິຖານຂອງລາວກາຍເປັນຄວາມບາບ
8 ຂໍໃຫ້ວັນເວລາຂອງລາວມີໜ້ອຍ ຂໍໃຫ້ອີກຜູ້ໜຶ່ງມາຍຶດຕຳແໜ່ງຂອງລາວ
9 ຂໍໃຫ້ລູກຂອງລາວກຳພ້າພໍ່ ແລະເມຍຂອງລາວເປັນໝ້າຍ
10 ຂໍໃຫ້ລູກຂອງລາວຕ້ອງພະເນຈອນຂໍທານໄປ
ຂໍໃຫ້ລາວຫາອາຫານຈາກບ່ອນເພພັງຊຶ່ງພວກເຂົາອາໄສຢູ່
11 ຂໍໃຫ້ເຈົ້າໜີ້ມາຍຶດຂອງທັງໝົດທີ່ລາວມີຢູ່
ຂໍຄົນຕ່າງຖິ່ນມາປຸ້ນຜົນງານຂອງລາວໄປ
12 ຂໍຢ່າໃຫ້ຜູ້ໃດເມດຕາລາວ ຢ່າໃຫ້ຜູ້ໃດອີດູຕົນລູກກຳພ້າພໍ່ຂອງລາວ
13 ຂໍໃຫ້ຜູ້ຢູ່ພາຍຫລັງລາວຖືກຕັດອອກ
ຂໍໃຫ້ຕະກູນຂອງພວກເຂົາໝົດໄປໃນອີກຊົ່ວຊີວິດໜຶ່ງ
14 ຂໍໃຫ້ຄວາມຊົ່ວຊ້າຂອງບັນພະບູລຸດຂອງລາວຍັງເປັນທີ່ຈື່ຈຳໄດ້ຢູ່
ຕໍ່ພຣະພັກພຣະຜູ້ເປັນເຈົ້າຢ່າໃຫ້ບາບຂອງແມ່ລາວລຶບຫາຍໄປ
15 ຂໍໃຫ້ບາບນັ້ນຢູ່ຕໍ່ເບື້ອງພຣະພັກພຣະຜູ້ເປັນເຈົ້າເປັນນິດ

ເພື່ອພຣະອົງຈະຕັດການລະນຶກເຖິງພວກເຂົາເຫລົ່ານັ້ນຈາກແຜ່ນດິນໂລກ

16 ເພາະລາວບໍ່ຈື່ຈຳທີ່ຈະສະແດງຄວາມເມດຕາ
ແຕ່ຂົ່ມເຫັງຄົນຍາກຈົນ ແລະຄົນຂັດສົນ ເພື່ອຈະຂ້າຄົນທີ່ເສົ້າໃຈ
17 ລາວມັກສາບແຊ່ງ ຂໍໃຫ້ຄຳສາບແຊ່ງຕົກເທິງລາວເອງ
ລາວບໍ່ມັກການໃຫ້ພອນ ຂໍພອນຈົ່ງຫ່າງໄກຈາກລາວ
18 ລາວເອົາການສາບແຊ່ງຫົ່ມຕ່າງເສື້ອຜ້າຂອງລາວ
ຂໍໃຫ້ຊຶມເຂົ້າໄປໃນກາຍຂອງລາວເໝືອນຢ່າງນໍ້າ
ຂໍໃຫ້ຊຶມເຂົ້າໄປໃນກະດູກຂອງລາວເໝືອນຢ່າງນໍ້າມັນ
19 ໃຫ້ເໝືອນກັບເຄື່ອງແຕ່ງກາຍທີ່ຄຸມລາວຢູ່
ເໝືອນກັບເຂັມຂັດທີ່ຂັດລາວໄວ້ສະເໝີ
20 ທັງນີ້ຂໍໃຫ້ເປັນບຳເໜັດຈາກພຣະຜູ້ເປັນເຈົ້າແກ່ພວກສັດຕູຂອງຂ້ານ້ອຍ
ແກ່ຜູ້ທີ່ກ່າວຮ້າຍຕໍ່ຊີວິດຂອງຂ້ານ້ອຍ

21 ຂ້າແດ່ພຣະເຈົ້າຄືອົງພຣະຜູ້ເປັນເຈົ້າ
ຂໍກະທຳເພື່ອຂ້ານ້ອຍໂດຍເຫັນແກ່ພຣະນາມຂອງພຣະອົງ
ເພາະວ່າຄວາມເມດຕາຂອງພຣະອົງນັ້ນປະເສີດ ຂໍຊ່ວຍຂ້ານ້ອຍໃຫ້ພົ້ນ
22 ເພາະຂ້ານ້ອຍຍາກຈົນ ແລະຂັດສົນ
ແລະຈິດໃຈຂອງຂ້ານ້ອຍກໍບາດເຈັບຢູ່ພາຍໃນ
23 ຂ້ານ້ອຍສິ້ນສຸດໄປແລ້ວເໝືອນດັ່ງເງົາໃນຕອນແລງ
ຂ້ານ້ອຍຖືກປັດອອກຄືກັບຕັກແຕນ
24 ຫົວເຂົ່າຂອງຂ້ານ້ອຍກໍອ່ອນເພຍເພາະການອົດອາຫານ
ຮ່າງກາຍຂອງຂ້ານ້ອຍກໍຈ່ອຍຜອມລົງ
25 ຂ້ານ້ອຍກາຍເປັນທີ່ນິນທາຂອງພວກເຂົາ ເມື່ອພວກເຂົາເຫັນຂ້ານ້ອຍ
ພວກເຂົາກໍສັ່ນຫົວ

26 ຂ້າແດ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງຂ້ານ້ອຍ ຂໍຊ່ວຍຂ້ານ້ອຍ
ຂໍຊ່ວຍຂ້ານ້ອຍໃຫ້ລອດພົ້ນຕາມຄວາມເມດຕາຂອງພຣະອົງ
27 ເພື່ອພວກເຂົາຈະຮູ້ວ່ານີ້ເປັນສີພຣະຫັດຂອງພຣະອົງ ຂ້າແດ່ພຣະຜູ້ເປັນເຈົ້າ
ພຣະອົງໄດ້ກະທຳການນີ້
28 ໃຫ້ພວກເຂົາຖືກສາບແຊ່ງ ແຕ່ຂໍພຣະອົງອຳນວຍພຣະພອນ ເມື່ອພວກເຂົາລຸກຂຶ້ນ
ຂໍໃຫ້ພວກເຂົາໄດ້ອັບອາຍ ແຕ່ຂໍໃຫ້ຜູ້ຮັບໃຊ້ຂອງພຣະອົງຍິນດີ
29 ຂໍໃຫ້ພວກສັດຕູຂອງຂ້ານ້ອຍຫົ່ມຄວາມອັບອາຍ
ຂໍໃຫ້ຄວາມອັບອາຍສວມກາຍພວກເຂົາເໝືອນຢ່າງເສື້ອຄຸມ
30 ດ້ວຍປາກຂອງຂ້ານ້ອຍ

ຂ້ານ້ອຍຈະສັນລະເສີນ ພຣະຜູ້ເປັນເຈົ້າ
ຂ້ານ້ອຍຈະສັນລະເສີນພຣະອົງທ່າມກາງຄົນທັງຫລາຍ
31 ເພາະພຣະອົງຈະຊົງປະທັບຢູ່ເບື້ອງຂວາມືຂອງຄົນຂັດສົນ
ເພື່ອຊ່ວຍລາວໃຫ້ພົ້ນຈາກຄົນທີ່ໃສ່ໂທດຈິດໃຈລາວນັ້ນ

# ບົດທີ 110

## ພຣະຜູ້ເປັນເຈົ້າ ແລະເຈົ້າຊີວິດທີ່ພຣະອົງຊົງເລືອກ

1 ພຣະຜູ້ເປັນເຈົ້າຊົງກ່າວແກ່ອົງເປັນເຈົ້າຂອງຂ້ານ້ອຍວ່າ,
"ຈົ່ງນັ່ງຢູ່ທາງຂວາມືຂອງເຮົາ
ຈົນກວ່າເຮົາຈະປາບສັດຕູໃຫ້ຢູ່ໃຕ້ຕີນຂອງເຈົ້າ."
2 ພຣະຜູ້ເປັນເຈົ້າຈະຊົງແຜ່ຜາຍເດຊານຸພາບຂອງພຣະອົງ
ອອກຈາກເມືອງຊີໂອນ
ພຣະອົງຊົງກ່າວວ່າ, "ຈົ່ງປົກຄອງພວກສັດຕູຂອງເຈົ້າ."
3 ໃນມື້ທີ່ເຈົ້າຕໍ່ສູ້ສັດຕູຂອງເຈົ້ານັ້ນ
ໄພ່ພົນຂອງເຈົ້າຈະອາສາສະໝັກ
ພວກຊາຍໜຸ່ມຂອງເຈົ້າຈະມາເຖິງພູນ້ອຍສັກສິດ
ເໝືອນດັ່ງນໍ້າໝອກຄ້າງໃນຍາມເຊົ້າ.
4 ພຣະຜູ້ເປັນເຈົ້າຊົງສັນຍາຢ່າງເດັດຂາດດັ່ງນີ້ວ່າ,
"ເຈົ້າຈະເປັນປະໂລຫິດຕະຫລອດໄປ
ຢ່າງດຽວກັນກັບ ເມັນຄີເຊເດັກ"

5 ພຣະຜູ້ເປັນເຈົ້າຊົງປະທັບຢູ່ເບື້ອງຂວາມືຂອງເຈົ້າ
ພຣະອົງຈະຊົງເຮັດໃຫ້ເຈົ້າຊີວິດທັງຫລາຍ
ພ່າຍແພ້ໃນມື້ທີ່ພຣະອົງຊົງພຣະພິໂລດ.
6 ພຣະອົງຈະຊົງພິພາກສາຊົນຊາດຕ່າງໆ
ຈະຊົງເຮັດໃຫ້ສະໜາມຮົບເຕັມໄປດ້ວຍຊາກສົບ
ແລະພຣະອົງຈະຊົງໃຫ້ເຈົ້າຊີວິດທັງຫລາຍທົ່ວພື້ນແຜ່ນດິນພ່າຍແພ້ໄປ.
7 ເຈົ້າຊີວິດຈະດື່ມນໍ້າຫ້ວຍທີ່ຢູ່ໃກ້ຫົນທາງ
ແລ້ວຈະມີກຳລັງວັງຊາ ແລະຢືນຢູ່ຢ່າງມີໄຊ.

# ບົດທີ 111

## ຈົ່ງສັນລະເສີນພຣະເຈົ້າສຳລັບພຣະລາຊະກິດຍິ່ງໃຫຍ່ຂອງພຣະອົງ

1 ຈົ່ງສັນລະເສີນ ພຣະຜູ້ເປັນເຈົ້າ ເຖີດ
ຂ້ານ້ອຍຈະສັນລະເສີນ ພຣະຜູ້ເປັນເຈົ້າດ້ວຍສິ້ນສຸດໃຈຂອງຂ້ານ້ອຍ

ໃນຄະນະຜູ້ທ່ຽງທຳ ໃນຊຸມນຸມຊົນ
2 ບັນດາພຣະລາຊະກິດຂອງ ພຣະຜູ້ເປັນເຈົ້າຍິ່ງໃຫຍ່
ເປັນທີ່ຄົ້ນຄວ້າຂອງທຸກຄົນທີ່ພໍໃຈ
3 ພຣະລາຊະກິດຂອງພຣະອົງສູງສົ່ງ ແລະມີກຽດ
ແລະຄວາມຊອບທຳຂອງພຣະອົງດຳລົງຢູ່ເປັນນິດ
4 ພຣະອົງໄດ້ໃຫ້ພຣະລາຊະກິດອັນອັດສະຈັນຂອງພຣະອົງເປັນທີ່ຈົດຈຳ
ພຣະຜູ້ເປັນເຈົ້າມີພຣະຄຸນ ແລະເຕັມໄປດ້ວຍພຣະກະລຸນາ
5 ພຣະອົງປະທານອາຫານໃຫ້ຜູ້ທີ່ຢຳເກງພຣະອົງ
ພຣະອົງຈະຈົດຈຳຄຳໝັ້ນສັນຍາຂອງພຣະອົງສະເໝີ
6 ພຣະອົງໄດ້ສະແດງລິດທານຸພາບແຫ່ງພຣະລາຊະກິດຂອງພຣະອົງ
ແກ່ປະຊາຊົນຂອງພຣະອົງ
ເພື່ອຈະປະທານມໍລະດົກຂອງບັນດາປະຊາຊາດແກ່ພວກເຂົາ
7 ພຣະຫັດຖະກິດຂອງພຣະອົງນັ້ນສັດຊື່ ແລະຍຸດຕິທຳ
ແລະພຣະບັນຍັດທັງຫລາຍຂອງພຣະອົງກໍໄວ້ໃຈໄດ້
8 ຊຶ່ງດຳລົງຢູ່ເປັນນິດ ແລະປະກອບດ້ວຍຄວາມຈິງກັບຄວາມທ່ຽງທຳ
9 ພຣະອົງໃຊ້ການໄຖ່ໃຫ້ມາຍັງປະຊາຊົນຂອງພຣະອົງ
ພຣະອົງບັນຊາຄຳໝັ້ນສັນຍາຂອງພຣະອົງເປັນນິດ
ພຣະນາມຂອງພຣະອົງບໍລິສຸດ ແລະໜ້າຢຳເກງແທ້ໆ

**ຈົ່ງຢຳເກງພຣະຜູ້ເປັນເຈົ້າ**

10 ຄວາມຢຳເກງ ພຣະຜູ້ເປັນເຈົ້າ ເປັນຜ່ານເລີ່ມຕົ້ນຂອງສະຕິປັນຍາ
ບັນດາຜູ້ທີ່ປະຕິບັດຕາມພຣະບັນຍັດຂອງພຣະອົງກໍໄດ້ຄວາມເຂົ້າໃຈດີ
ການສັນລະເສີນ ພຣະເຈົ້າດຳລົງຢູ່ເປັນນິດ

# ບົດທີ 112

## ພຣະສັນຍາຕ່າງໆ ສຳລັບຜູ້ທີ່ຢຳເກງພຣະຜູ້ເປັນເຈົ້າ

1 ຈົ່ງສັນລະເສີນ ພຣະຜູ້ເປັນເຈົ້າ ເຖີດ ຄົນທີ່ຢຳເກງ ພຣະຜູ້ເປັນເຈົ້າກໍເປັນສຸກ
ຄືຜູ້ປິຕິຍິນດີຢ່າງໃຫຍ່ຫລວງໃນພຣະບັນຍັດຂອງພຣະອົງ
2 ເຊື້ອສາຍຂອງລາວຈະເປັນໃຫຍ່ໃນແຜ່ນດິນ
ຊົ່ວອາຍຸທີ່ທ່ຽງທຳຈະຮັບພຣະພອນ
3 ຊັບສົມບັດ ແລະຄວາມຮັ່ງມີຢູ່ໃນເຮືອນຂອງລາວ
ແລະຄວາມຊອບທຳຂອງລາວດຳລົງຢູ່ເປັນນິດ
4 ຄວາມສະຫວ່າງຈະສ່ອງຂຶ້ນມາໃນຄວາມມືດໃຫ້ຄົນທ່ຽງທຳ

ລາວມີຄວາມເມດຕາ ເຕັມໄປດ້ວຍຄວາມສົງສານ ແລະຊອບທຳ
5 ຄົນທີ່ດີຈະສະແດງຄວາມເມດຕາເຈົ້າ ແລະໃຫ້ຢືມ
ລາວຈະດຳເນີນການຂອງລາວດ້ວຍຄວາມຍຸດຕິທຳ
6 ແນ່ນອນ ລາວຈະບໍ່ຖືກຍົກຍ້າຍເປັນນິດ
ຄົນຈະລະນຶກເຖິງຄົນຊອບທຳຢູ່ເປັນນິດ
7 ລາວຈະບໍ່ຢ້ານຂ່າວຮ້າຍ ຈິດໃຈຂອງລາວຍຶດແໜ້ນ
ວາງໃຈໃນ ພຣະຜູ້ເປັນເຈົ້າ
8 ຈິດໃຈຂອງລາວແນ່ນອນ
ລາວຈະບໍ່ຢ້ານຈົນກວ່າຈະເຫັນຄວາມປະສົງຕໍ່ສັດຕູຂອງລາວສຳເລັດ
9 ລາວແຈກຈ່າຍ ລາວໄດ້ໃຫ້ແກ່ຄົນຍາກຈົນ
ຄວາມຊອບທຳຂອງລາວດຳລົງເປັນນິດ
ເຂົາຂອງລາວຈະຖືກເຊີດຊູຂຶ້ນດ້ວຍກຽດ

10 ຄົນຊົ່ວຈະເຫັນແລ້ວເປັນທຸກໃຈ ລາວກັດແຂ້ວແລ້ວລະລາຍໄປ
ຄວາມປາດຖະໜາຂອງຄົນຊົ່ວນັ້ນຈະດັບສູນໄປ

# ບົດທີ 113

## ຈົ່ງສັນລະເສີນພຣະເຈົ້າ ເພາະຄວາມດີງາມຂອງພຣະອົງ

1 ຈົ່ງສັນລະເສີນ ພຣະຜູ້ເປັນເຈົ້າບັນດາຜູ້ຮັບໃຊ້ຂອງ ພຣະຜູ້ເປັນເຈົ້າ ເອີຍ
ຈົ່ງສັນລະເສີນເຖີດ ຈົ່ງສັນລະເສີນພຣະນາມ ພຣະຜູ້ເປັນເຈົ້າ
2 ສາທຸການແດ່ພຣະນາມຂອງ ພຣະຜູ້ເປັນເຈົ້າຕັ້ງແຕ່ບັດນີ້ເປັນຕົ້ນໄປເປັນນິດ
3 ຕັ້ງແຕ່ບ່ອນດວງອາທິດຂຶ້ນຈົນຮອດບ່ອນດວງອາທິດຕົກ
ພຣະນາມຂອງ ພຣະຜູ້ເປັນເຈົ້າ ເປັນທີ່ສັນລະເສີນ

4 ພຣະຜູ້ເປັນເຈົ້າປະທັບຢູ່ສູງເໜືອປະຊາຊາດທັງປວງ
ແລະສະຫງ່າລາສີຂອງພຣະອົງສູງເໜືອຟ້າສະຫວັນ
5 ບໍ່ມີພະໃດເປັນເໝືອນ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງເຮົາ ຜູ້ປະທັບເທິງທີ່ສູງ
6 ຜູ້ຖ່ອມພຣະໄທລົງທອດພຣະເນດສິ່ງທັງປວງໃນຟ້າສະຫວັນ
ແລະແຜ່ນດິນໂລກ
7 ພຣະອົງຍົກຄົນຍາກຈົນຂຶ້ນມາຈາກຂີ້ຝຸ່ນດິນ
ແລະຍົກຄົນຂັດສົນຂຶ້ນມາຈາກກອງຂີ້ເຖົ່າ
8 ເພື່ອໃຫ້ລາວນັ່ງກັບບັນດາເຈົ້ານາຍ
ຄືບັນດາເຈົ້ານາຍແຫ່ງຊົນຊາດຂອງພຣະອົງ
9 ພຣະອົງໂຜດໃຫ້ຍິງໝັນມີເຮືອນຢູ່ ເປັນແມ່ທີ່ຊື່ນບານມີບຸດ
ຈົ່ງສັນລະເສີນ ພຣະຜູ້ເປັນເຈົ້າ

# ບົດທີ 114

## ຈົ່ງຢຳເກງພຣະເຈົ້າ ເພາະບັນດາພຣະລາຊະກິດຂອງພຣະອົງ

1 ເມື່ອອິສຣາເອນອອກໄປຈາກເອຢິບ
ຄືວົງວານຂອງຢາໂຄບໄປຈາກຊົນຊາດຕ່າງພາສາ
2 ຢູດາກາຍເປັນສະຖານທີ່ບໍລິສຸດຂອງພຣະອົງ
ອິສຣາເອນເປັນອານາຈັກຂອງພຣະອົງ

3 ທະເລເບິ່ງແລ້ວໜີຢໍແດນຫັນຫລັງກັບ
4 ພູເຂົາໂດດເຕັ້ນຄືກັບກັບແກະຜູ້ ໂນນພູໂດດເຕັ້ນຄືກັບລູກແກະ
5 ເປັນຫຍັງນໍ ທະເລເອີຍ ເຈົ້າຈຶ່ງໜີ ແມ່ນ້ຳຢໍແດນເອີຍ
ເຈົ້າຈຶ່ງຫັນຫລັງກັບ
6 ພູເຂົາເອີຍ ເຈົ້າຈຶ່ງໂດດເຕັ້ນຄືກັບແກະຜູ້ ໂນນພູເອີຍ
ເຈົ້າຈຶ່ງໂດດເຕັ້ນຄືກັບລູກແກະ

7 ແຜ່ນດິນເອີຍ ສັ່ນສະເທືອນຢູ່ຕໍ່ເບື້ອງພຣະພັກພຣະຜູ້ເປັນເຈົ້າ
ຕໍ່ເບື້ອງພຣະພັກພຣະເຈົ້າຂອງຢາໂຄບ
8 ຜູ້ໃຫ້ຫີນເປັນສະນ້ຳ ຫີນເຫລັກໄຟເປັນນ້ຳພຸ

# ບົດທີ 115

## ພຣະເຈົ້າທ່ຽງແທ້ພຽງອົງດຽວ

1 ຂ້າແດ່ພຣະຜູ້ເປັນເຈົ້າ ແດ່ພຣະອົງເທົ່ານັ້ນ ແດ່ພຣະອົງເທົ່ານັ້ນ
ລັດສະໝີຕ້ອງເປັນຂອງພຣະອົງ ບໍ່ແມ່ນເປັນຂອງພວກຂ້ານ້ອຍ
ເພາະຄວາມຮັກອັນໝັ້ນຄົງ ແລະຄວາມຈິງຂອງພຣະອົງ.
2 ເປັນຫຍັງພວກຊົນຊາດຕ່າງໆ ຈຶ່ງຖາມຂ້ານ້ອຍວ່າ,
“ພຣະເຈົ້າຂອງພວກເຈົ້າຢູ່ໃສ?”
3 ພຣະເຈົ້າຂອງພວກເຮົາສະຖິດຢູ່ເທິງສະຫວັນຊັ້ນຟ້າ
ຊົງກະທຳໄດ້ທຸກສິ່ງຕາມທີ່ພຣະອົງຊົງຕ້ອງການ.

4 ພະຂອງພວກເຂົາໄດ້ສ້າງຂຶ້ນມາດ້ວຍເງິນ ແລະຄຳ
ຊຶ່ງປະກອບຂຶ້ນດ້ວຍມືຂອງມະນຸດ.
5 ພະເຫລົ່ານັ້ນມີປາກແຕ່ເວົ້າບໍ່ເປັນ
ມີຕາ ແຕ່ບໍ່ເຫັນຮຸ່ງ.
6 ມີຫູ ແຕ່ບໍ່ໄດ້ຍິນ
ມີດັງ ແຕ່ດົມກິ່ນບໍ່ໄດ້.
7 ມີມື ແຕ່ຈັບບາຍຫຍັງບໍ່ໄດ້

ມີຕີນ ແຕ່ຍ່າງບໍ່ເປັນ
ແລະມີຄໍແຕ່ອອກສຽງບໍ່ໄດ້.
8 ຂໍໃຫ້ຜູ້ທີ່ສ້າງພະເຫລົ່ານີ້ ແລະທຸກຄົນທີ່ເຊື່ອພະນີ້
ຈົ່ງກາຍເປັນເໝືອນຮູບຄວັດທີ່ພວກເຂົາສ້າງຂຶ້ນມານັ້ນ.
9 ພວກອິສຣາເອນເອີຍ ຈົ່ງເຊື່ອໄວ້ວາງໃຈໃນພຣະຜູ້ເປັນເຈົ້າ
ພຣະອົງໄດ້ຊົງຊ່ອຍເຫລືອ ແລະປ້ອງກັນພວກເຈົ້າໄວ້.
10 ປະໂລຫິດທັງຫລາຍຂອງພຣະຜູ້ເປັນເຈົ້າຈົ່ງເຊື່ອໄວ້ວາງໃນພຣະຜູ້ເປັນເຈົ້າ
ພຣະອົງໄດ້ຊົງຊ່ອຍເຫລືອແລະປ້ອງກັນພວກທ່ານ.
11 ທຸກໆຄົນທີ່ຢຳເກງພຣະອົງ ຈົ່ງເຊື່ອໄວ້ວາງໃຈໃນພຣະຜູ້ເປັນເຈົ້າ
ພຣະອົງຊົງຊ່ອຍເຫລືອ ແລະປ້ອງກັນພວກເຈົ້າໄວ້.
12 ພຣະຜູ້ເປັນເຈົ້າຊົງລະນຶກເຖິງພວກເຮົາ ແລະຈະອວຍພອນໃຫ້
ພຣະອົງຈະອວຍພອນແກ່ພວກອິສຣາເອນ
ແລະພວກປະໂລຫິດທຸກໆຄົນຂອງພຣະເຈົ້າ.
13 ພຣະອົງຈະຊົງອວຍພຣະພອນແກ່ຜູ້ທີ່ຢຳເກງພຣະອົງທຸກຄົນ
ຕະຫລອດທັງຜູ້ໃຫຍ່ ແລະຜູ້ນ້ອຍ.

14 ຂໍໃຫ້ພຣະຜູ້ເປັນເຈົ້າຊົງໃຫ້ພວກເຈົ້າ
ແລະເຊື້ອສາຍຂອງພວກເຈົ້າມີລູກມີຫລານ.
15 ຂໍໃຫ້ພວກເຈົ້າໄດ້ຮັບພຣະພອນຈາກພຣະຜູ້ເປັນເຈົ້າ
ຜູ້ຊົງສ້າງສະຫວັນຊັ້ນຟ້າ ແລະແຜ່ນດິນໂລກ.
16 ສະຫວັນຊັ້ນຟ້າເປັນຂອງພຣະຜູ້ເປັນເຈົ້າອົງດຽວ
ສ່ວນແຜ່ນດິນໂລກ ພຣະອົງຊົງປະທານໃຫ້ແກ່ມະນຸດ.
17 ຜູ້ທີ່ຕາຍໄປແລ້ວ ຄືຜູ້ທີ່ຢູ່ໃນບ່ອນສະຫງົບ
ບໍ່ໄດ້ສັນລະເສີນພຣະຜູ້ເປັນເຈົ້າ.
18 ແຕ່ວ່າຝ່າຍພວກເຮົາຜູ້ທີ່ມີຊີວິດຢູ່ຈະຂອບພຣະຄຸນພຣະອົງ
ທັງໃນປະຈຸບັນນີ້ ແລະຕະຫລອດໄປ
ຈົ່ງສັນລະເສີນພຣະຜູ້ເປັນເຈົ້າ

# ບົດທີ 116

## ຜູ້ພົ້ນຈາກຄວາມຕາຍໄດ້ສັນລະເສີນພຣະເຈົ້າ

1 ຂ້ານ້ອຍຮັກພຣະຜູ້ເປັນເຈົ້າ ເພາະພຣະອົງຊົງຟັງສຽງຂ້ານ້ອຍ
ພຣະອົງຊົງຟັງຄຳອ້ອນວອນຂອງຂ້ານ້ອຍ.
2 ທຸກໆເທື່ອທີ່ຂ້ານ້ອຍຮ້ອງຫາພຣະອົງ
ພຣະອົງຊົງຟັງສຽງຂ້ານ້ອຍ.

3 ຄວາມຕາຍໄດ້ຜູກມັດຂ້ານ້ອຍໄວ້ແໜ້ນ
ຂ້ານ້ອຍສະທ້ານຢ້ານກົວຫລຸມຝັງສົບທີ່ສຸດ
ຂ້ານ້ອຍຮູ້ສຶກຢ້ານ ແລະໂສກເສົ້າເສຍໃຈຫລາຍ.
4 ຂ້ານ້ອຍຈຶ່ງຮ້ອງຫາພຣະຜູ້ເປັນເຈົ້າວ່າ,
“ຂ້າແດ່ພຣະຜູ້ເປັນເຈົ້າຂໍໂຜດໃຫ້ຂ້ານ້ອຍພົ້ນໄພແດ່ທ້ອນ.”

5 ພຣະຜູ້ເປັນເຈົ້າຊົງເມດຕາ ແລະຊອບທຳ
ພຣະເຈົ້າຂອງພວກເຮົາມີຄວາມເມດຕາກະລຸນາ.
6 ພຣະຜູ້ເປັນເຈົ້າຊົງຄຸ້ມຄອງຜູ້ທີ່ຂາດບ່ອນເພິ່ງພາອາໄສ
ເມື່ອຂ້ານ້ອຍຕົກຕໍ່າລຳບາກ ພຣະອົງກໍຊົງຊ່ອຍຂ້ານ້ອຍໃຫ້ພົ້ນ.
7 ຈິດໃຈຂອງຂ້ານ້ອຍເອີຍ ຈົ່ງສະຫງົບເທີ້ນ
ເພາະພຣະອົງຊົງດີຕໍ່ຂ້ານ້ອຍ.
8 ພຣະຜູ້ເປັນເຈົ້າໄດ້ຊົງຊ່ອຍຂ້ານ້ອຍໃຫ້ພົ້ນຈາກຄວາມຕາຍ
ພຣະອົງຊົງລະງັບນໍ້າຕາຂ້ານ້ອຍໄວ້
ແລະຊ່ອຍຂ້ານ້ອຍບໍ່ໃຫ້ພ່າຍແພ້.
9 ດັ່ງນີ້ ຂ້ານ້ອຍຈຶ່ງດຳເນີນຊີວິດຢູ່ເບື້ອງພຣະພັກຂອງພຣະອົງໃນໂລກມະນຸດ.
10 ເຖິງແມ່ນເວລາທີ່ຂ້ານ້ອຍເວົ້າວ່າ,
“ຂ້ານ້ອຍໄດ້ຮັບຄວາມທຸກຍາກອັນຍິ່ງໃຫຍ່.”
11 ເຖິງແມ່ນໃນເວລາທີ່ຂ້ານ້ອຍຢ້ານ ຂ້ານ້ອຍໄດ້ເວົ້າວ່າ,
“ບໍ່ມີໃຜເປັນໜ້າເຊື່ອຖືໄດ້”
ຂ້ານ້ອຍກໍຍັງເຊື່ອໄວ້ວາງໃຈໃນພຣະອົງ.

12 ຍ້ອນຄຸນງາມຄວາມດີທຸກຢ່າງທີ່ພຣະຜູ້ເປັນເຈົ້າຊົງມີຕໍ່ຂ້ານ້ອຍ
ຂ້ານ້ອຍຈະເອົາສິ່ງໃດມາຖວາຍແດ່ພຣະອົງ.
13 ຂ້ານ້ອຍຈະນຳເອົາເຄື່ອງດື່ມມາຖວາຍແດ່ພຣະຜູ້ເປັນເຈົ້າ
ເພື່ອຂອບພຣະຄຸນໃນການທີ່ພຣະອົງຊົງຊ່ອຍຂ້ານ້ອຍໃຫ້ພົ້ນໄພ.
14 ຂ້ານ້ອຍຈະຖວາຍສິ່ງທີ່ໄດ້ສັນຍາໄວ້ແດ່ພຣະອົງ
ໃນເວລາໄພ່ພົນຂອງພຣະອົງປະຊຸມກັນ.

15 ເມື່ອມີຄົນຜູ້ໜຶ່ງໃນພວກໄພ່ພົນຂອງພຣະຜູ້ເປັນເຈົ້າຕາຍໄປ
ພຣະອົງກໍຊົງເສົ້າພຣະໄທຫລາຍ.
16 ຂ້າແດ່ພຣະຜູ້ເປັນເຈົ້າຂ້ານ້ອຍເປັນຜູ້ຮັບໃຊ້ຂອງພຣະອົງ
ຂ້ານ້ອຍຮັບໃຊ້ພຣະອົງຕາມທີ່ແມ່ຂ້ານ້ອຍເຄີຍປະຕິບັດມາ
ພຣະອົງໄດ້ຊົງໃຫ້ຂ້ານ້ອຍມີອິດສະຫລະ.

17 ຂ້ານ້ອຍຈະຖວາຍເຄື່ອງບູຊາຂອບພຣະຄຸນ

ແລະອ້ອນວອນຫາພຣະອົງ.
18-19 ຂ້ານ້ອຍຈະຖວາຍເຄື່ອງບູຊາຂອບພຣະຄຸນ
ໃນເວລາໄພ່ພົນຂອງພຣະອົງປະຊຸມກັນທີ່ເດີ່ນພຣະວິຫານ
ຂອງພຣະອົງໃນນະຄອນ ເຢຣູຊາເລັມ ຕາມທີ່ໄດ້ສັນຍາໄວ້
ຈົ່ງສັນລະເສີນ ພຣະຜູ້ເປັນເຈົ້າ.

# ບົດທີ 117

## ການສັນລະເສີນພຣະເຈົ້າເພາະຄວາມເມດຕາ ແລະຄວາມຈິງຂອງພຣະອົງ

1 ປະຊາຊາດທັງປວງເອີຍ ຈົ່ງສັນລະເສີນ ພຣະຜູ້ເປັນເຈົ້າ
ຊົນຊາດທັງຫລາຍເອີຍ ຈົ່ງຍົກຍ້ອງພຣະອົງ
2 ເພາະຄວາມເມດຕາຂອງພຣະອົງທີ່ມີຕໍ່ເຮົານັ້ນໃຫຍ່ຫລວງ
ແລະຄວາມຈິງຂອງ ພຣະຜູ້ເປັນເຈົ້າດຳລົງຢູ່ເປັນນິດ
ຈົ່ງສັນລະເສີນ ພຣະຜູ້ເປັນເຈົ້າ ເຖີດ

# ບົດທີ 118

## ການໂມທະນາຂອບຄຸນ ເພາະຄວາມພົ້ນຂອງພຣະຜູ້ປັນເຈົ້າ.

1 ໂອ ຈົ່ງໂມທະນາຂອບພຣະຄຸນ ພຣະຜູ້ເປັນເຈົ້າ ເພາະພຣະອົງປະເສີດ
ເພາະຄວາມເມດຕາຂອງພຣະອົງດຳລົງຢູ່ເປັນນິດ”
2 ບັດນີ້ ຈົ່ງໃຫ້ອິສຣາເອນກ່າວວ່າ “ຄວາມເມດຕາຂອງພຣະອົງດຳລົງເປັນນິດ”
3 ບັດນີ້ ຈົ່ງໃຫ້ວົງວານ ອາໂຣນກ່າວວ່າ
“ຄວາມເມດຕາຂອງພຣະອົງດຳລົງເປັນນິດ”
4 ບັດນີ້ ຈົ່ງໃຫ້ບັນດາຜູ້ທີ່ຢຳເກງ ພຣະຜູ້ເປັນເຈົ້າກ່າວວ່າ
“ຄວາມເມດຕາຂອງພຣະອົງດຳລົງເປັນນິດ”

5 ຂ້ານ້ອຍໄດ້ຮ້ອງທູນ ພຣະຜູ້ເປັນເຈົ້າ ໃນຍາມເປັນທຸກ
ພຣະຜູ້ເປັນເຈົ້າຕອບຂ້ານ້ອຍ ແລະຕັ້ງຂ້ານ້ອຍໃຫ້ຢູ່ໃນບ່ອນກວ້າງຂວາງ
6 ມີພຣະຜູ້ເປັນເຈົ້າຢູ່ຝ່າຍຂ້ານ້ອຍ ຂ້ານ້ອຍຈະບໍ່ຢ້ານ
ມະນຸດຈະເຮັດຫຍັງແກ່ຂ້ານ້ອຍໄດ້
7 ພຣະຜູ້ເປັນເຈົ້າຢູ່ຝ່າຍຂ້ານ້ອຍ ພ້ອມກັບຜູ້ອື່ນທີ່ຊ່ວຍຂ້ານ້ອຍ
ຂ້ານ້ອຍຈຶ່ງຈະເຫັນຄວາມປາດຖະໜາຂອງຂ້ານ້ອຍ
ຕໍ່ຄົນທີ່ກຽດຊັງຂ້ານ້ອຍນັ້ນສຳເລັດ

8 ການວາງໃຈໃນ ພຣະຜູ້ເປັນເຈົ້າກໍດີກວ່າທີ່ຈະເຊື່ອໃຈໃນມະນຸດ
9 ການວາງໃຈໃນ ພຣະຜູ້ເປັນເຈົ້າກໍດີກວ່າທີ່ຈະເຊື່ອໃຈໃນເຈົ້ານາຍ

10 ປະຊາຊາດທັງຫລາຍໄດ້ອ້ອມຂ້ານ້ອຍ
ແຕ່ຂ້ານ້ອຍຈະທຳລາຍພວກເຂົາໃນພຣະນາມ ພຣະຜູ້ເປັນເຈົ້າ
11 ພວກເຂົາທັງຫລາຍໄດ້ອ້ອມຂ້ານ້ອຍ ອ້ອມຮອບຂ້ານ້ອຍ
ແຕ່ຂ້ານ້ອຍຈະທຳລາຍພວກເຂົາໃນພຣະນາມ ພຣະຜູ້ເປັນເຈົ້າ
12 ພວກເຂົາໄດ້ອ້ອມຂ້ານ້ອຍເໝືອນໂຕເຜິ້ງ ພວກເຂົາທັງຫລາຍດັບ
ແລ້ວເໝືອນແປວໄຟໜາມ
ເພາະຂ້ານ້ອຍຈະທຳລາຍພວກເຂົາໃນພຣະນາມ ພຣະຜູ້ເປັນເຈົ້າ
13 ຂ້ານ້ອຍຖືກຊຸກຢ່າງໜັກ ເພື່ອໃຫ້ຂ້ານ້ອຍລົ້ມລົງ
ແຕ່ ພຣະຜູ້ເປັນເຈົ້າຊ່ວຍຂ້ານ້ອຍ
14 ພຣະຜູ້ເປັນເຈົ້າ ເປັນກຳລັງ ແລະບົດເພງຂອງຂ້ານ້ອຍ
ພຣະອົງມາເປັນຄວາມພົ້ນຂອງຂ້ານ້ອຍ

15 ສຽງແຫ່ງຄວາມຍິນດີ ແລະຄວາມພົ້ນຢູ່ໃນເຕັນຂອງຜູ້ຊອບທຳກ່າວວ່າ
“ພຣະຫັດຂວາຂອງ ພຣະຜູ້ເປັນເຈົ້າຫ້າວຫານ
16 ພຣະຫັດຂວາຂອງ ພຣະຜູ້ເປັນເຈົ້າ ເປັນທີ່ເຊີດຊູ
ພຣະຫັດຂວາຂອງ ພຣະຜູ້ເປັນເຈົ້າຫ້າວຫານ”
17 ຂ້ານ້ອຍຈະບໍ່ຕາຍ ແຕ່ຂ້ານ້ອຍຈະເປັນຢູ່
ແລະປະກາດພຣະລາຊະກິດຂອງ ພຣະຜູ້ເປັນເຈົ້າ
18 ພຣະຜູ້ເປັນເຈົ້າຕີສອນຂ້ານ້ອຍຢ່າງໜັກ
ແຕ່ພຣະອົງບໍ່ມອບຂ້ານ້ອຍໄວ້ກັບຄວາມຕາຍ

19 ຂໍເປີດປະຕູຄວາມຊອບທຳໃຫ້ຂ້ານ້ອຍ
ຂ້ານ້ອຍຈະເຂົ້າປະຕູນັ້ນໄປ ແລະຈະສັນລະເສີນ ພຣະຜູ້ເປັນເຈົ້າ
20 ນີ້ຄືປະຕູຂອງ ພຣະຜູ້ເປັນເຈົ້າຄົນຊອບທຳຈະເຂົ້າໄປທາງນີ້
21 ຂ້ານ້ອຍຈະສັນລະເສີນພຣະອົງ ເພາະພຣະອົງຟັງຂ້ານ້ອຍ
ແລະມາເປັນຄວາມພົ້ນຂອງຂ້ານ້ອຍ
22 ຫີນ ຊຶ່ງຊ່າງກໍ່ໄດ້ປະຕິເສດ ໄດ້ກັບກາຍເປັນຫີນເສົາເອກແລ້ວ
23 ການນີ້ເປັນມາຈາກ ພຣະຜູ້ເປັນເຈົ້າ
ເປັນການອັດສະຈັນປະກົດແກ່ຕາເຮົາ
24 ນີ້ເປັນມື້ທີ່ ພຣະຜູ້ເປັນເຈົ້າ ໄດ້ສ້າງ
ເຮົາຈະຊົມຊື່ນ ແລະຍິນດີໃນມື້ນັ້ນ

25 ຂ້າແດ່ ພຣະຜູ້ເປັນເຈົ້າຂໍຊ່ວຍຂ້ານ້ອຍໃຫ້ລອດພົ້ນ
ຂ້າແດ່ ພຣະຜູ້ເປັນເຈົ້າ
ບັດນີ້ ຂໍປະທານຄວາມຈະເລີນແກ່ຂ້ານ້ອຍທັງຫລາຍເຖີດ

26 ຂໍໃຫ້ທ່ານຜູ້ເຂົ້າມາໃນພຣະນາມຂອງ ພຣະຜູ້ເປັນເຈົ້າ ຈົ່ງໄດ້ຮັບພຣະພອນ
ຂ້ານ້ອຍທັງຫລາຍອວຍພອນທ່ານທັງຫລາຍ
ຈາກພຣະນິເວດຂອງ ພຣະຜູ້ເປັນເຈົ້າ
27 ພຣະເຈົ້າ ເປັນ ພຣະຜູ້ເປັນເຈົ້າ ຜູ້ປະທານຄວາມສະຫວ່າງແກ່ເຮົາ
ຈົ່ງຜູກມັດເຄື່ອງບູຊາດ້ວຍເຊືອກໄປເຖິງເຂົາຂອງແທ່ນບູຊາ
28 ພຣະອົງເປັນ ພຣະເຈົ້າ ຂອງຂ້ານ້ອຍ ແລະຂ້ານ້ອຍຈະສັນລະເສີນພຣະອົງ
ພຣະອົງເປັນ ພຣະເຈົ້າ ຂອງຂ້ານ້ອຍ ຂ້ານ້ອຍຈະເຊີດຊູພຣະອົງ
29 ໂອ ຈົ່ງໂມທະນາຂອບພຣະຄຸນ ພຣະຜູ້ເປັນເຈົ້າ ເພາະພຣະອົງປະເສີດ
ເພາະຄວາມເມດຕາຂອງພຣະອົງດຳລົງຢູ່ເປັນນິດ

# ບົດທີ 119

## ຄວາມດີເລີດຂອງພຣະທຳພຣະເຈົ້າ

1 ບັນດາຜູ້ທີ່ດີຮອບຄອບໃນທາງຂອງຕົນກໍເປັນສຸກ
ຄືຜູ້ທີ່ດຳເນີນຕາມພຣະທຳຂອງ ພຣະເຈົ້າ
2 ຜູ້ທີ່ຮັກສາພຣະໂອວາດຂອງພຣະອົງກໍເປັນສຸກ
ຄືຜູ້ທີ່ສະແຫວງຫາພຣະອົງດ້ວຍສິ້ນສຸດໃຈ
3 ຜູ້ທີ່ບໍ່ເຮັດຜິດ ແຕ່ດຳເນີນຕາມທາງຂອງພຣະອົງ
4 ພຣະອົງໄດ້ຊົງຕັ້ງຂໍ້ບັງຄັບຂອງພຣະອົງໄວ້
ໃຫ້ເຮົາທັງຫລາຍປະຕິບັດຕາມຢ່າງເຄັ່ງຄັດ
5 ໂອ ຂໍໃຫ້ທາງທັງຫລາຍຂອງຂ້ານ້ອຍໝັ້ນຄົງ
ໃນການຮັກສາກົດເກນຂອງພຣະອົງ
6 ແລະຂ້ານ້ອຍຈະບໍ່ໄດ້ຮັບຄວາມອາຍ
ໂດຍຈິດຈໍ່ຢູ່ທີ່ພຣະບັນຍັດທັງປວງຂອງພຣະອົງ
7 ຂ້ານ້ອຍຈະສັນລະເສີນພຣະອົງດ້ວຍໃຈທີ່ທ່ຽງຕົງ
ເມື່ອຂ້ານ້ອຍຮຽນຮຽນຮູ້ກົດໝາຍອັນຊອບທຳຂອງພຣະອົງ
8 ຂ້ານ້ອຍຈະຖືກົດເກນຂອງພຣະອົງ
ຂໍຢ່າຊົງປະຖິ້ມຂ້ານ້ອຍເລີຍ

## ການເຊື່ອຟັງຕໍ່ພຣະທຳຂອງພຣະເຈົ້າ

9 ຊາຍໜຸ່ມຈະຮັກສາທາງຂອງຕົນໃຫ້ບໍລິສຸດໄດ້ຢ່າງໃດ
ໂດຍການເຝົ້າລະວັງຕາມພຣະທຳຂອງພຣະອົງ
10 ຂ້ານ້ອຍສະແຫວງຫາພຣະອົງດ້ວຍສຸດໃຈຂອງຂ້ານ້ອຍ
ຂໍຢ່າໃຫ້ຂ້ານ້ອຍຫລົງໄປຈາກພຣະບັນຍັດຂອງພຣະອົງ
11 ຂ້ານ້ອຍໄດ້ສະສົມພຣະຄຳສັ່ງຂອງພຣະອົງໄວ້ໃນໃຈຂອງຂ້ານ້ອຍ

ເພື່ອຂ້ານ້ອຍຈະບໍ່ເຮັດບາບຕໍ່ພຣະອົງ
12 ຂ້າແດ່ພຣະເຈົ້າ ສາທຸການແດ່ພຣະອົງ
ຂໍຊົງສອນກົດເກນຂອງພຣະອົງແກ່ຂ້ານ້ອຍ
13 ຂ້ານ້ອຍຈະປະກາດດ້ວຍຮີມປາກຂອງຂ້ານ້ອຍ
ເຖິງບັນດາກົດໝາຍແຫ່ງພຣະໂອດຂອງພຣະອົງ
14 ຂ້ານ້ອຍປິຕິຍິນດີໃນທາງແຫ່ງບັນດາພຣະໂອວາດຂອງພຣະອົງ
ຫລາຍເທົ່າກັບຄວາມຮັ່ງມີທັງປວງ
15 ຂ້ານ້ອຍຈະພາວັນນາຂໍ້ບັງຄັບຂອງພຣະອົງ
ແລະຈັບຕາຂອງຂ້ານ້ອຍໃນວິຖີທາງທັງຫລາຍຂອງພຣະອົງ
16 ຂ້ານ້ອຍຈະປິຕິຍິນດີໃນກົດເກນຂອງພຣະອົງ
ຂ້ານ້ອຍຈະບໍ່ລືມພຣະທຳຄຳສັ່ງຂອງພຣະອົງ

## ການຊົມຊື່ນຍິນດີໃນພຣະບັນຍັດຂອງພຣະເຈົ້າ

17 ຂໍຊົງໂຜດເມດຕາຜູ້ຮັບໃຊ້ຂອງພຣະອົງ ເພື່ອຂ້ານ້ອຍຈະມີຊີວິດ
ແລະຖືຮັກສາພຣະທຳຂອງພຣະອົງ
18 ຂໍເປີດຕາຂ້ານ້ອຍເພື່ອຂ້ານ້ອຍຈະເຫັນ
ການອັດສະຈັນຈາກພຣະທຳຂອງພຣະອົງ
19 ຂ້ານ້ອຍເປັນຄົນພະເນຈອນຢູ່ເທິງແຜ່ນດິນໂລກ
ຂໍຢ່າຊົງເຊື່ອງບັງພຣະບັນຍັດຂອງພຣະອົງຈາກຂ້ານ້ອຍເສຍ
20 ຈິດໃຈຂອງຂ້ານ້ອຍຮ້ອນຮົນ
ດ້ວຍການຄຳນຶງເຖິງກົດໝາຍຂອງພຣະອົງຕະຫລອດເວລາ
21 ພຣະອົງຊົງປາບປາມຄົນຈອງຫອງ ຜູ້ທີ່ຖືກສາບແຊ່ງ
ຜູ້ທີ່ໜີໄປຈາກພຣະບັນຍັດຂອງພຣະອົງ
22 ຂໍຊົງນຳການປ້ອຍດ່າ ແລະການໝິ່ນປະໝາດໄປຈາກຂ້ານ້ອຍ
ເພາະຂ້ານ້ອຍໄດ້ຮັກສາພຣະໂອວາດຂອງພຣະອົງ
23 ເຖິງແມ່ນວ່າ ພວກເຈົ້ານາຍນັ່ງປຶກສາກັນຕໍ່ສູ້ຂ້ານ້ອຍ
ຜູ້ຮັບໃຊ້ຂອງພຣະອົງຈະພາວັນນາກົດເກນຂອງພຣະອົງ
24 ບັນດາພຣະໂອວາດຂອງພຣະອົງເປັນຄວາມປິຕິຍິນດີຂອງຂ້ານ້ອຍ
ເປັນທີ່ປຶກສາຂອງຂ້ານ້ອຍ

## ການພິຈາລະນາຕຶກຕອງໃນການເຊື່ອຟັງພຣະທຳຂອງພຣະເຈົ້າ

25 ຈິດໃຈຂອງຂ້ານ້ອຍຕິດກັບຝຸ່ນດິນ
ຂໍຊົງຮັກສາຊີວິດຂອງຂ້ານ້ອຍຕາມພຣະຄຳບັນຊາຂອງພຣະອົງ
26 ຂ້ານ້ອຍໄດ້ທູນເຖິງຫົນທາງຂອງຂ້ານ້ອຍ
ແລະພຣະອົງກໍຊົງຕອບແກ່ຂ້ານ້ອຍ

ຂໍຊົງສອນກົດເກນຂອງພຣະອົງແກ່ຂ້ານ້ອຍ
27 ຂໍຊົງເຮັດໃຫ້ຂ້ານ້ອຍເຂົ້າໃຈທາງຂໍ້ບັງຄັບຂອງພຣະອົງ
ແລະຂ້ານ້ອຍຈະພາວັນນາ
ເຖິງພຣະລາຊະກິດອັນອັດສະຈັນຂອງພຣະອົງ
28 ຈິດໃຈຂອງຂ້ານ້ອຍລະລາຍໄປດ້ວຍຄວາມໂສກເສົ້າ
ຂໍຊົງເສີມກຳລັງຂອງຂ້ານ້ອຍຕາມພຣະສັນຍາຂອງພຣະອົງ
29 ຂໍໃຫ້ທາງອັນທຽມເທັດໄກຈາກຂ້ານ້ອຍ
ແລະຂໍໂຜດປະທານພຣະທຳຂອງພຣະອົງແກ່ຂ້ານ້ອຍ
30 ຂ້ານ້ອຍໄດ້ເລືອກທາງແຫ່ງຄວາມສັດຊື່
ຂ້ານ້ອຍຕັ້ງກົດໝາຍຂອງພຣະອົງໄວ້ຕໍ່ໜ້າຂ້ານ້ອຍ
31 ຂ້ານ້ອຍຜູກພັນຢູ່ກັບບັນດາພຣະໂອວາດຂອງພຣະອົງ ຂ້າແດ່ພຣະເຈົ້າ
ຂໍຢ່າໃຫ້ຂ້ານ້ອຍອັບອາຍຂາຍໜ້າ
32 ຂ້ານ້ອຍຈະແລ່ນໃນທາງພຣະບັນຍັດຂອງພຣະອົງ
ເມື່ອພຣະອົງຊົງຂະຫຍາຍຄວາມເຂົ້າໃຈຂອງພຣະອົງ

## ຄຳອະທິຖານອ້ອນວອນຂໍຄວາມເຂົ້າໃຈ

33 ຂ້າແດ່ພຣະເຈົ້າຂໍຊົງສອນທາງກົດເກນຂອງພຣະອົງແກ່ຂ້ານ້ອຍ
ແລະຂ້ານ້ອຍຈະຮັກສາທາງນັ້ນໄວ້ຈົນສຸດປາຍ
34 ຂໍປະທານຄວາມເຂົ້າໃຈແກ່ຂ້ານ້ອຍ
ເພື່ອຂ້ານ້ອຍຈະຮັກສາພຣະທຳຂອງພຣະອົງໄວ້
ແລະປະຕິບັດຕາມດ້ວຍສຸດໃຈຂອງຂ້ານ້ອຍ
35 ຂໍໂຜດໃຫ້ຂ້ານ້ອຍໄປໃນທາງແຫ່ງພຣະບັນຍັດຂອງພຣະອົງ
ເພາະຂ້ານ້ອຍຍິນດີໃນທາງນັ້ນ
36 ຂໍຫງ່ຽງໃຈຂ້ານ້ອຍໃນບັນດາພຣະໂອວາດຂອງພຣະອົງ
ແລະບໍ່ແມ່ນໃນທາງໂລບກຳໄລ
37 ຂໍຊົງຫັນໜ່ວຍຕາຂອງຂ້ານ້ອຍໄປຈາກການເບິ່ງແຕ່ສິ່ງທີ່ອະນິຈັງ
ແລະຂໍຊົງຮັກສາຊີວິດຂອງຂ້ານ້ອຍ
38 ຂໍຊົງຢືນຢັນພຣະສັນຍາຂອງພຣະອົງກັບຜູ້ຮັບໃຊ້ຂອງພຣະອົງ
ຜູ້ຢຳເກງພຣະອົງ
39 ຂໍຊົງຫັນການເຍາະເຍີ້ຍ ຊຶ່ງຂ້ານ້ອຍຢ້ານກົວນັ້ນໄປເສຍ
ເພາະກົດໝາຍຂອງພຣະອົງນັ້ນດີ
40 ເບິ່ງແມ ຂ້ານ້ອຍຄຳນຶງເຖິງຂໍ້ບັງຄັບຂອງພຣະອົງ
ໂດຍຄວາມຊອບທຳຂອງພຣະອົງ ຂໍຊົງຮັກສາຊີວິດຂອງຂ້ານ້ອຍ

## ຄວາມເຊື່ອວາງໃຈໃນພຣະບັນຍັດຂອງພຣະເຈົ້າ

41 ຂ້າແດ່ພຣະເຈົ້າຂໍຄວາມຮັກໝັ້ນຄົງຂອງພຣະອົງ ມາເຖິງຂ້ານ້ອຍ
ຄືຄວາມລອດພົ້ນຂອງພຣະອົງຕາມພຣະສັນຍາຂອງພຣະອົງ
42 ແລ້ວຂ້ານ້ອຍຈະມີຄຳຕອບແກ່ຜູ້ທີ່ເຍາະເຍີ້ຍຂ້ານ້ອຍ
ເພາະຂ້ານ້ອຍວາງໃຈໃນພຣະທຳບັນຍັດຂອງພຣະອົງ
43 ຂໍຢ່າຊົງນຳພຣະບັນຍັດແຫ່ງຄວາມຈິງ ອອກໄປຈາກປາກຂອງຂ້ານ້ອຍເລີຍ
ເພາະຄວາມຫວັງຂອງຂ້ານ້ອຍຢູ່ໃນພຣະທຳຂອງພຣະອົງ
44 ຂ້ານ້ອຍຈະປະຕິບັດພຣະທຳຂອງພຣະອົງສືບໆໄປເປັນນິດ
45 ແລະຂ້ານ້ອຍຈະດຳເນີນຊີວິດຢ່າງເສລີ
ເພາະຂ້ານ້ອຍໄດ້ຊອກສະແຫວງຫາຂໍ້ບັງຄັບຂອງພຣະອົງ
46 ຂ້ານ້ອຍເວົ້າເຖິງພຣະໂອວາດຂອງພຣະອົງ
ຕໍ່ໜ້າຕໍ່ຕາບັນດາກະສັດ ແລະຈະບໍ່ອັບອາຍຂາຍໜ້າ
47 ເພາະຂ້ານ້ອຍຊົມຊື່ນຍິນດີໃນພຣະບັນຍັດຂອງພຣະອົງຊຶ່ງຂ້ານ້ອຍຮັກ
48 ຂ້ານ້ອຍເຄົາລົບນັບຖືພຣະບັນຍັດຂອງພຣະອົງ ຊຶ່ງຂ້ານ້ອຍຮັກ
ແລະຂ້ານ້ອຍຈະພາວັນນາກົດເກນຂອງພຣະອົງ

## ເຄັດລັບໃນພຣະບັນຍັດຂອງພຣະເຈົ້າ

49 ຂໍຊົງລະນຶກເຖິງພຣະທຳຂອງພຣະອົງທີ່ມີຕໍ່ຜູ້ຮັບໃຊ້ຂອງພຣະອົງ
ຊຶ່ງພຣະອົງຊົງເຮັດໃຫ້ຂ້ານ້ອຍຫວັງຢູ່ນັ້ນ
50 ນີ້ ຄືການເລົ້າໂລມໃນຄວາມທຸກຍາກຂອງຂ້ານ້ອຍ
ຄືພຣະສັນຍາຂອງພຣະອົງທີ່ໃຫ້ຊີວິດແກ່ຂ້ານ້ອຍ
51 ຄົນຈອງຫອງຫຍໍ້ຫຍັນຂ້ານ້ອຍຢ່າງໜັກ
ແຕ່ຂ້ານ້ອຍບໍ່ຫັນໜີຈາກພຣະທຳຂອງພຣະອົງ
52 ເມື່ອຂ້ານ້ອຍຄິດເຖິງກົດໝາຍຂອງພຣະອົງແຕ່ບູຮານນັ້ນ
ຂ້າແດ່ພຣະເຈົ້າຂ້ານ້ອຍໄດ້ຮັບຄວາມເລົ້າໂລມໃຈ
53 ຄວາມຮ້າຍກາດອັນຮ້ອນຮົນ ໄດ້ຜູກມັດຂ້ານ້ອຍໄວ້
ຍ້ອນຄົນອະທຳປະຖິ້ມພຣະທຳຂອງ ພຣະເຈົ້າໄປ
54 ກົດເກນຂອງພຣະອົງໄດ້ເປັນບົດເພງຂອງຂ້ານ້ອຍ
ໃນເຮືອນທີ່ຂ້ານ້ອຍອາໃສຢູ່ນັ້ນ
55 ຂ້າແດ່ພຣະເຈົ້າໃນກາງຄືນ ຂ້ານ້ອຍລະນຶກເຖິງພຣະນາມຂອງພຣະອົງ
ແລະປະຕິບັດຕາມພຣະທຳຂອງພຣະອົງ
56 ພຣະພອນນີ້ ໄດ້ຕົກມາຍັງຂ້ານ້ອຍ
ຄືທີ່ຂ້ານ້ອຍຮັກສາຂໍ້ບັງຄັບຂອງພຣະອົງໄວ້

## ການຈົງຮັກພັກດີຕໍ່ພຣະທຳຂອງພຣະຜູ້ເປັນເຈົ້າ

57 ຂ້າແດ່ພຣະຜູ້ເປັນເຈົ້າພຣະອົງຊົງເປັນທຸກສິ່ງຂອງຂ້ານ້ອຍ
ຂ້ານ້ອຍຂໍສັນຍາວ່າຈະເຊື່ອຟັງກົດຂໍ້ບັນຍັດຂອງພຣະອົງ.
58 ຂ້ານ້ອຍທູນຂໍຕໍ່ພຣະອົງໂດຍສຸດອົກສຸດໃຈຂອງຂ້ານ້ອຍ
ຂໍຊົງໂຜດເມດຕາກະລຸນາຕໍ່ຂ້ານ້ອຍຕາມທີ່ພຣະອົງຊົງສັນຍາໄວ້ເທີ້ນ.
59 ຂ້ານ້ອຍໄດ້ພິຈາລະນາການດຳເນີນຊີວິດຂອງຂ້ານ້ອຍແລ້ວ
ແລະສັນຍາວ່າຈະເຮັດຕາມກົດລະບຽບຂອງພຣະອົງ.
60 ຂ້ານ້ອຍເຊື່ອຟັງຄຳສັ່ງຂອງພຣະອົງ
ໂດຍບໍ່ໄດ້ລໍຊ້າ.
61 ຄົນຊົ່ວຮ້າຍໄດ້ມັດຮອບຂ້ານ້ອຍໄວ້
ແຕ່ວ່າຂ້ານ້ອຍບໍ່ໄດ້ລືມພຣະທຳຂອງພຣະອົງ.
62 ໃນຕອນກາງຄືນຂ້ານ້ອຍລຸກຂຶ້ນສັນລະເສີນພຣະອົງ
ຍ້ອນການຕັດສິນອັນຍຸດຕິທຳຂອງພຣະອົງ.
63 ຂ້ານ້ອຍເປັນເພື່ອນກັບທຸກໆຄົນທີ່ຮັບໃຊ້ພຣະອົງ
ແລະທຸກໆຄົນທີ່ເຊື່ອຟັງກົດຂໍ້ບັນຍັດຂອງພຣະອົງ.
64 ຂ້າແດ່ພຣະຜູ້ເປັນເຈົ້າ ໂລກນີ້ເຕັມໄປດ້ວຍ
ຄວາມຮັກອັນໝັ້ນຄົງຂອງພຣະອົງ
ຂໍຊົງສັ່ງສອນກົດຂໍ້ບັນຍັດຂອງພຣະອົງແກ່ຂ້ານ້ອຍດ້ວຍ.

## ຄຸນຄ່າຂອງພຣະທຳ

65 ຂ້າແດ່ພຣະຜູ້ເປັນເຈົ້າພຣະອົງຊົງຮັກສາຄຳສັນຍາຂອງພຣະອົງ
ແລະພຣະອົງກໍຊົງດີຕໍ່ຂ້ານ້ອຍຜູ້ຮັບໃຊ້ຂອງພຣະອົງ.
66 ຂໍພຣະອົງຊົງປະກາດຄວາມຮູ້
ແລະຄວາມສະຫລາດຫລັກແຫລມແກ່ຂ້ານ້ອຍດ້ວຍ
ເພາະຂ້ານ້ອຍເຊື່ອຖືໃນກົດບັນຍັດຂອງພຣະອົງ.
67 ກ່ອນທີ່ພຣະອົງຈະລົງໂທດຂ້ານ້ອຍນັ້ນ
ກໍເພາະວ່າຂ້ານ້ອຍເຄີຍເຮັດຜິດ
ແຕ່ດຽວນີ້ຂ້ານ້ອຍເຊື່ອຟັງພຣະທຳຂອງພຣະອົງ.
68 ພຣະອົງຊົງດີ ແລະເມດຕາກະລຸນາ
ຂໍພຣະອົງຊົງສັ່ງສອນກົດບັນຍັດຂອງພຣະອົງແກ່ຂ້ານ້ອຍດ້ວຍ.
69 ຄົນຈອງຫອງໄດ້ຫາເລື່ອງໃສ່ຂ້ານ້ອຍ
ແຕ່ຂ້ານ້ອຍເຊື່ອຟັງກົດລະບຽບຂອງພຣະອົງຢ່າງສຸດອົກສຸດໃຈ.
70 ຄົນເຫລົ່ານີ້ບໍ່ມີຄວາມເຂົ້າໃຈຢ່າງໃດເລີຍ
ແຕ່ຂ້ານ້ອຍໄດ້ພົບຄວາມຍິນດີໃນພຣະທຳຂອງພຣະອົງ.

71 ການລົງໂທດຂ້ານ້ອຍເປັນການດີສຳລັບຂ້ານ້ອຍ
ເພາະວ່າມັນເຮັດໃຫ້ຂ້ານ້ອຍຮຽນຮູ້ເຖິງຂໍ້ຄຳສັ່ງຂອງພຣະອົງ.
72 ພຣະທຳທີ່ພຣະອົງຊົງປະທານໃຫ້ນັ້ນ
ມີຄ່າສຳລັບຂ້ານ້ອຍຫລາຍກວ່າເງິນ ແລະຄຳຫລາຍພັນແທ່ງ

## ຄວາມຍຸດຕິທຳແຫ່ງພຣະທຳຂອງພຣະເຈົ້າ

73 ພຣະຫັດຂອງພຣະອົງໄດ້ສ້າງ ແລະສະຖາປະນາຂ້ານ້ອຍ
ຂໍປະທານຄວາມເຂົ້າໃຈແກ່ຂ້ານ້ອຍ
ເພື່ອຂ້ານ້ອຍຈະຮຽນຮູ້ພຣະບັນຍັດຂອງພຣະອົງ
74 ບັນດາຜູ້ຢຳເກງພຣະອົງຈະເຫັນຂ້ານ້ອຍ ແລະຊື່ນຊົມ
ເພາະຂ້ານ້ອຍໄດ້ຫວັງໃນພຣະສັນຍາຂອງພຣະອົງ
75 ຂ້າແດ່ພຣະເຈົ້າ ຂ້ານ້ອຍຮູ້ວ່າການພິພາກສາຂອງພຣະອົງນັ້ນ
ຖືກຕ້ອງແລ້ວ ແລະຮູ້ວ່າຄວາມສັດຊື່
ແຫ່ງການລົງໂທດຂອງພຣະອົງຊົງໃຫ້ຂ້ານ້ອຍທຸກຍາກ
76 ຂໍຄວາມຮັກໝັ້ນຄົງຂອງພຣະອົງເປັນທີ່ເລົ້າໂລມຂ້ານ້ອຍ
ຕາມພຣະບັນຊາຂອງພຣະອົງທີ່ມີແກ່ຜູ້ຮັບໃຊ້ຂອງພຣະອົງ
77 ຂໍພຣະກະລຸນາຂອງພຣະອົງມາຍັງຂ້ານ້ອຍ ເພື່ອຂ້ານ້ອຍຈະເປັນຢູ່
ເພາະພຣະທຳຂອງພຣະອົງເປັນທີ່ປິຕິຍິນດີຂອງຂ້ານ້ອຍ
78 ຂໍໃຫ້ຄົນຈອງຫອງໄດ້ຮັບຄວາມອັບອາຍ
ເພາະພວກເຂົາໄດ້ຂວ້ຳຂ້ານ້ອຍລົງດ້ວຍຄຳຕົວະ
ຝ່າຍຂ້ານ້ອຍຈະພາວັນນາຂໍ້ບັງຄັບຂອງພຣະອົງ
79 ຂໍໃຫ້ບັນດາຜູ້ທີ່ຢຳເກງພຣະອົງຫັນກັບມາຍັງຂ້ານ້ອຍ
ເພື່ອພວກເຂົາຈະຮູ້ຈັກບັນດາຂໍ້ຄຳສັ່ງຂອງພຣະອົງ
80 ຂໍໃຫ້ຈິດໃຈຂ້ານ້ອຍບໍ່ມີຕຳໜິໃນເລື່ອງກົດເກນຂອງພຣະອົງ
ເພື່ອຂ້ານ້ອຍຈະບໍ່ຕ້ອງອັບອາຍຂາຍໜ້າ

## ຄຳອະທິຖານອ້ອນວອນສຳລັບການຊ່ວຍກູ້

81 ຈິດໃຈຂອງຂ້ານ້ອຍອ່ອນແຮງຄອຍຖ້າຄວາມລອດພົ້ນຂອງພຣະອົງ
ຂ້ານ້ອຍຫວັງໃນພຣະຄຳຂອງພຣະອົງ
82 ດວງຕາຂອງຂ້ານ້ອຍມືດມົວໄປ ຍ້ອນຄອຍຖ້າພຣະດຳລັດຂອງພຣະອົງ
ຂ້ານ້ອຍທູນຖາມວ່າ, ເມື່ອໃດພຣະອົງຈະຊົງເລົ້າໂລມຂ້ານ້ອຍ
83 ເພາະວ່າຂ້ານ້ອຍເປັນເໝືອນກັບຖົງໜັງໃສ່ເຫລົ້າອະງຸ່ນ
ທີ່ຖືກອົບຄວັນໄຟ ແຕ່ຂ້ານ້ອຍຍັງບໍ່ລືມກົດເກນຂອງພຣະອົງ
84 ຜູ້ຮັບໃຊ້ຂອງພຣະອົງຕ້ອງອົດທົນຢູ່ດົນນານເທົ່າໃດ
ພຣະອົງຈຶ່ງຈະຊົງພິພາກສາບັນດາຜູ້ຂົ່ມເຫັງຂ້ານ້ອຍ

85 ຄົນຈອງຫອງໄດ້ຂຸດຂຸມດັກຂ້ານ້ອຍ
ຊຶ່ງບໍ່ສອດຄ່ອງກັບພຣະທຳຂອງພຣະອົງ
86 ພຣະບັນຍັດທັງປວງຂອງພຣະອົງຊົງທ່ຽງແທ້ແນ່ນອນ
ພວກເຂົາຂົ່ມເຫັງຂ້ານ້ອຍດ້ວຍຄວາມບໍ່ຈິງ ຂໍຊົງຊ່ວຍຂ້ານ້ອຍດ້ວຍ
87 ພວກເຂົາເກືອບຈະເຮັດໃຫ້ຂ້ານ້ອຍຕາຍໄປຈາກແຜ່ນດິນໂລກແລ້ວ
ແຕ່ຂ້ານ້ອຍບໍ່ປະຖິ້ມຂໍ້ບັງຄັບຂອງພຣະອົງ
88 ຂໍຊົງຮັກສາຊີວິດຂອງຂ້ານ້ອຍໄວ້ດ້ວຍຄວາມຮັກໝັ້ນຄົງຂອງພຣະອົງ
ເພື່ອຂ້ານ້ອຍຈະປະຕິບັດຕາມພຣະບັນຊາແຫ່ງພຣະໂອດຂອງພຣະອົງ

## ການເຊື່ອພຣະທຳພຣະຜູ້ເປັນເຈົ້າ

89 ຂ້າແດ່ພຣະຜູ້ເປັນເຈົ້າພຣະທຳຂອງພຣະອົງຊົງມີຢູ່ຕະຫລອດໄປ
ແລະຊົງໝັ້ນຄົງຢູ່ໃນສະຫວັນຊັ້ນຟ້າ.
90 ຄວາມສັດຊື່ຂອງພຣະອົງຊົງດຳລົງຢູ່ທຸກຍຸກທຸກສະໄໝ
ພຣະອົງຊົງຕັ້ງໂລກນີ້ໄວ້ໃນບ່ອນຂອງມັນ ແລະມັນກໍຍັງຕັ້ງຢູ່.
91 ຍ້ອນຂໍ້ຄຳສັ່ງຂອງພຣະອົງທຸກສິ່ງກໍຍັງຕັ້ງໝັ້ນຄົງຢູ່ຈົນເຖິງທຸກມື້ນີ້
ເພາະທຸກສິ່ງນີ້ເປັນທາດຮັບໃຊ້ຂອງພຣະອົງ.
92 ຖ້າວ່າພຣະທຳຂອງພຣະອົງບໍ່ເປັນທີ່ຍິນດີຂອງຂ້ານ້ອຍແລ້ວ
ຂ້ານ້ອຍຈະຕ້ອງຕາຍຍ້ອນການລົງໂທດນີ້.
93 ຂ້ານ້ອຍຈະບໍ່ລະເລີຍຕໍ່ກົດລະບຽບຂອງພຣະອົງຈັກເທື່ອ
ເພາະຍ້ອນສິ່ງເຫລົ່ານີ້ ພຣະອົງໄດ້ຊ່ວຍໃຫ້ຂ້ານ້ອຍມີຊີວິດຢູ່.
94 ຂ້ານ້ອຍເປັນຄົນຂອງພຣະອົງ ຂໍຊົງຊ່ວຍຂ້ານ້ອຍໃຫ້ພົ້ນໄພດ້ວຍ
ຂ້ານ້ອຍເຄີຍພະຍາຍາມເຮັດຕາມຄຳສັ່ງຂອງພຣະອົງ.
95 ຄົນຊົ່ວຮ້າຍຄອຍຖ້າສັງຫານຂ້ານອຍ
ແຕ່ຂ້ານ້ອຍໄດ້ຍຶດໝັ້ນໃນກົດຂໍ້ບັນຍັດຂອງພຣະອົງ.
96 ຂ້ານ້ອຍຮູ້ວ່າບໍ່ມີສິ່ງໃດດີໝົດທຸກຢ່າງ
ແຕ່ວ່າຂໍ້ຄຳສັ່ງຂອງພຣະອົງບໍ່ມີຂອບເຂດຈຳກັດ.

## ຄວາມຮັກພຣະທຳຂອງພຣະຜູ້ເປັນເຈົ້າ

97 ຂ້ານ້ອຍຮັກພຣະທຳຂອງພຣະອົງທີ່ສຸດ
ຂ້ານ້ອຍຄຶດເຖິງພຣະທຳນີ້ຕະຫລອດວັນເວລາ.
98 ຂ້ານ້ອຍຖືຄຳສັ່ງຂອງພຣະອົງຕະຫລອດເວລາ
ແລະເຮັດໃຫ້ຂ້ານ້ອຍສະຫລາດກວ່າສັດຕູທັງຫລາຍ.
99 ຂ້ານ້ອຍເຂົ້າໃຈຫລາຍກວ່າຄູສອນທັງຫລາຍຂອງຂ້ານ້ອຍ
ເພາະຂ້ານ້ອຍຄຶດເຖິງຄຳສອນຂອງພຣະອົງ.
100 ຂ້ານ້ອຍມີຄວາມສະຫລາດຫລັກແຫລມກວ່າພວກຜູ້ເຖົ້າ

ເພາະຂ້ານ້ອຍເຊື່ອຟັງຄຳສັ່ງສອນຂອງພຣະອົງ.
101 ຂ້ານ້ອຍໄດ້ຫລີກໜີຈາກການດຳເນີນໃນທາງຊົ່ວທຸກຢ່າງ
ເພາະຂ້ານ້ອຍຕ້ອງການເຊື່ອຟັງພຣະທຳຂອງພຣະອົງ.
102 ຂ້ານ້ອຍບໍ່ໄດ້ລະເລີຍຕໍ່ຄຳສອນຂອງພຣະອົງ
ເພາະວ່າພຣະອົງເອງຊົງເປັນຜູ້ສັ່ງສອນຂ້ານ້ອຍ.
103 ຄວາມເວົ້າຂອງພຣະອົງຫວານກວ່ານໍ້າເຜີ້ງ.
104 ຂ້ານ້ອຍໄດ້ຮັບຄວາມສະຫລາດຫລັກແຫລມ
ຈາກກົດຂໍ້ບັນຍັດຂອງພຣະອົງ ດັ່ງນັ້ນ
ຂ້ານ້ອຍຈຶ່ງກຽດຊັງການດຳເນີນໃນທາງຊົ່ວທຸກຢ່າງ.

## ແສງສະຫວ່າງຈາກພຣະທຳຂອງພຣະຜູ້ເປັນເຈົ້າ

105 ພຣະທຳຂອງພຣະອົງເປັນເໝືອນຕະກຽງສ່ອງແສງນຳໜ້າຂ້ານ້ອຍ
ແລະເປັນແສງແຈ້ງເຍືອງທີນທາງຂ້ານ້ອຍ.
106 ຂ້ານ້ອຍຈະຮັກສາຄຳໝັ້ນສັນຍາອັນໝັ້ນຄົງຂອງຂ້ານ້ອຍໄວ້
ເພື່ອເຊື່ອຟັງຄຳສອນອັນແທ້ຈິງຂອງພຣະອົງ.
107 ຂ້າແດ່ພຣະຜູ້ເປັນເຈົ້າຄວາມທຸກທໍລະມານຂອງຂ້ານ້ອຍ
ແສນສາຫັດທີ່ສຸດ
ຂໍຊົງໂຜດໃຫ້ຂ້ານ້ອຍມີຊີວິດຢູ່ຕໍ່ໄປຕາມທີ່ພຣະອົງຊົງສັນຍາໄວ້.
108 ຂ້າແດ່ພຣະຜູ້ເປັນເຈົ້າຂໍພຣະອົງຊົງຮັບເອົາຄຳອ້ອນວອນ
ຂອບພຣະຄຸນຈາກຂ້ານ້ອຍ
ແລະສັ່ງສອນຂໍ້ຄຳສັ່ງຂອງພຣະອົງໃຫ້ແກ່ຂ້ານ້ອຍ.
109 ຂ້ານ້ອຍພ້ອມສະເໝີທີ່ຈະສ່ຽງຊີວິດ
ແຕ່ຈະບໍ່ລືມພຣະທຳຂອງພຣະອົງ.
110 ຄົນຊົ່ວຮ້າຍຫ້າງແຮ້ວໃສ່ຂ້ານ້ອຍ
ແຕ່ວ່າຂ້ານ້ອຍບໍ່ໄດ້ລະເມີດຂໍ້ຄຳສັ່ງຂອງພຣະອົງ.
111 ກົດຂໍ້ຄຳສັ່ງຂອງພຣະອົງເປັນສົມບັດຂອງຂ້ານ້ອຍຕະຫລອດໄປ
ແລະສ້າງຄວາມພາກພູມໃຈແກ່ຂ້ານ້ອຍ.
112 ຂ້ານ້ອຍໄດ້ຕັດສິນໃຈເຊື່ອຟັງກົດລະບຽບຂອງພຣະອົງ
ຈົນເຖິງມື້ຕາຍຂອງຂ້ານ້ອຍ.

## ຄວາມປອດໄພໃນພຣະບັນຍັດຂອງພຣະເຈົ້າ

113 ຂ້ານ້ອຍກຽດຊັງຄົນສອງໃຈ ແຕ່ຂ້ານ້ອຍຮັກພຣະທຳຂອງພຣະອົງ
114 ພຣະອົງເປັນບ່ອນລີ້ໄພ ແລະເປັນກຳບັງຂອງຂ້ານ້ອຍ
ຂ້ານ້ອຍຫວັງໃນພຣະຄຳຂອງພຣະອົງ
115 ຄົນເຮັດຊົ່ວອະທຳຈົ່ງໄປເສຍຈາກຂ້ານ້ອຍ

ເພື່ອຂ້ານ້ອຍຈະຮັກສາພຣະບັນຍັດຂອງ ພຣະເຈົ້າ
116 ຂໍຊົງເຊີດຊູຂ້ານ້ອຍໄວ້ດ້ວຍພຣະດຳລັດຂອງພຣະອົງ
ເພື່ອຂ້ານ້ອຍຈະເປັນຢູ່
117 ຂໍຊົງເຊີດຊູຂ້ານ້ອຍຂຶ້ນ ເພື່ອຂ້ານ້ອຍຈະປອດໄພ
ແລະມີຄວາມນັບຖືກົດເກນຂອງພຣະອົງສືບໆໄປ
118 ພຣະອົງຊົງຂັບໄລ່ບັນດາຄົນທັງຫລາຍ
ທີ່ບໍ່ເຊື່ອຟັງພຣະທຳຂອງພຣະອົງໃຫ້ໜີໄປພຣະເຈົ້າຂ້າ
ກົນອຸບາຍຂອງພວກເຂົາບໍ່ມີຜົນຫຍັງ
119 ພຣະອົງຊົງປະຖິ້ມຄົນອະທຳຂອງແຜ່ນດິນໂລກເໝືອນຖິ້ມຫີນແຮ່
ເພາະສະນັ້ນ ຂ້ານ້ອຍຮັກພຣະຄຳຂອງພຣະອົງ
120 ເນື້ອໜັງຂອງຂ້ານ້ອຍສັ່ນເຊັນ ເພາະຢ້ານກົວພຣະອົງ
ແລະຂ້ານ້ອຍຢ້ານຄຳພິພາກສາຂອງພຣະອົງ

## ການເຊື່ອຟັງພຣະບັນຍັດຂອງພຣະເຈົ້າ

121 ຂ້ານ້ອຍໄດ້ເຮັດທຸກສິ່ງທີ່ຍຸດຕິທຳ ແລະຖືກຕ້ອງ
ຂໍຢ່າຊົງປະຖິ້ມຂ້ານ້ອຍແກ່ຜູ້ບີບບັງຄັບຂ້ານ້ອຍ
122 ຂໍຊົງເປັນປະກັນ ເພື່ອຊ່ວຍຜູ້ຮັບໃຊ້ຂອງພຣະອົງ
ຂໍຢ່າໃຫ້ຄົນຈອງຫອງບີບບັງຄັບຂ້ານ້ອຍ
123 ໜ່ວຍຕາຂອງຂ້ານ້ອຍມືດມົວໄປ ຍ້ອນຄອຍຖ້າຄວາມພົ້ນຂອງພຣະອົງ
ແລະຄອຍຖ້າພຣະດຳລັດຊອບທຳຂອງພຣະອົງສຳເລັດຜົນລົງ
124 ຂໍຊົງກະທຳແກ່ຜູ້ຮັບໃຊ້ຂອງພຣະອົງ
ຕາມຄວາມຮັກໝັ້ນຄົງຂອງພຣະອົງ
ແລະຂໍຊົງສອນກົດເກນຂອງພຣະອົງແກ່ຂ້ານ້ອຍ
125 ຂ້ານ້ອຍເປັນຜູ້ຮັບໃຊ້ຂອງພຣະອົງ
ຂໍປະທານຄວາມເຂົ້າໃຈແກ່ຂ້ານ້ອຍ
ເພື່ອຂ້ານ້ອຍຈະຮູ້ເຖິງບັນດາພຣະໂອວາດຂອງພຣະອົງ
126 ເປັນເວລາທີ່ພຣະເຈົ້າຄວນຈັດການ ເພາະພວກເຂົາບິດເບືອນ
ພຣະທຳຂອງພຣະອົງ
127 ເພາະສະນັ້ນ ຂ້ານ້ອຍຮັກພຣະບັນຍັດຂອງພຣະອົງຍິ່ງກວ່າທອງຄຳ
ຍິ່ງກວ່າທອງຄຳເນື້ອດີ
128 ເພາະສະນັ້ນ ຂ້ານ້ອຍໃຊ້ຂໍ້ບັງຄັບຂອງພຣະອົງທັງໝົດ
ນຳພາບາດຕີນຂອງຂ້ານ້ອຍເອງ
ຂ້ານ້ອຍກຽດຊັງທາງແຫ່ງການບໍ່ສັດຊື່ທຸກທາງ

## ຄວາມປະສົງໃນການເຊື່ອຟັງພຣະທຳຂອງພຣະຜູ້ເປັນເຈົ້າ

129 ການສັ່ງສອນຂອງພຣະອົງຊົງອັດສະຈັນ
ຂ້ານ້ອຍເຊື່ອຟັງຄຳສອນເຫລົ່ານັ້ນຢ່າງສຸດອົກສຸດໃຈ.
130 ຄຳສອນຂອງພຣະອົງໃຫ້ແສງສະຫວ່າງ
ແລະນຳຄວາມສະຫລຽວສະຫລາດມາໃຫ້ຜູ້ທີ່ບໍ່ມີປະສົບການ.
131 ຂ້ານ້ອຍຫິວກະຫາຍຂໍ້ຄຳສັ່ງຂອງພຣະອົງ.
132 ຂໍພຣະອົງຊົງທອດພຣະເນດເບິ່ງຂ້ານ້ອຍ ແລະຊົງເມດຕາກະລຸນາຂ້ານ້ອຍ
ດັ່ງທີ່ພຣະອົງຊົງກະທຳຕໍ່ຜູ້ທີ່ຮັກພຣະອົງ.
133 ຂໍຊົງຮັກສາຂ້ານ້ອຍໃຫ້ພົ້ນຈາກຄວາມຈິບຫາຍດັ່ງທີ່ພຣະອົງຊົງສັນຍາໄວ້
ຂໍຢ່າຊົງປ່ອຍໃຫ້ຄວາມຊົ່ວຊະນະຂ້ານ້ອຍ.
134 ຂໍພຣະອົງຊົງຊ່ອຍຂ້ານ້ອຍໃຫ້ພົ້ນຈາກຜູ້ທີ່ຂົ່ມເຫັງ
ເພື່ອວ່າຂ້ານ້ອຍຈະເຊື່ອຟັງຂໍ້ຄຳສັ່ງຂອງພຣະອົງ.
135 ຂໍພຣະອົງຊົງອວຍພອນໂດຍການຊົງສະຖິດຢູ່ນຳຂ້ານ້ອຍ
ແລະຊົງສອນຂ້ານ້ອຍໃຫ້ຮູ້ຈັກກົດຂໍ້ບັນຍັດຂອງພຣະອົງ.
136 ນໍ້າຕາຂອງຂ້ານ້ອຍຫລັ່ງໄຫລອອກມາດັ່ງສາຍນໍ້າ
ຍ້ອນມະນຸດບໍ່ເຊື່ອຟັງພຣະທຳຂອງພຣະອົງ.

## ຄວາມຍຸດຕິທຳຂອງພຣະທຳ

137 ຂ້າແດ່ພຣະຜູ້ເປັນເຈົ້າພຣະອົງຊົງຍຸດຕິທຳ
ແລະພຣະທຳຂອງພຣະອົງຊົງຖືກຕ້ອງ ແລະທ່ຽງແທ້.
138 ກົດລະບຽບທີ່ພຣະອົງຊົງປະທານໃຫ້
ມີຄວາມສັດຈິງທີ່ສຸດ.
139 ຄວາມຮ້າຍຂອງຂ້ານ້ອຍໄດ້ລຸກໄໝ້ຂຶ້ນເໝືອນດັ່ງໄຟ
ເພາະວ່າສັດຕູຂອງຂ້ານ້ອຍບໍ່ໄດ້ຄິດເຖິງຂໍ້ຄຳສັ່ງຂອງພຣະອົງ.
140 ຄຳສັນຍາຂອງພຣະອົງຊົງໝັ້ນຄົງ
ຜູ້ຮັບໃຊ້ຂອງພຣະອົງຮັກຄຳສັນຍານີ້ຫລາຍ.
141 ຂ້ານ້ອຍເປັນຄົນບໍ່ສຳຄັນ ແລະໜ້າລັງກຽດ
ແຕ່ຂ້ານ້ອຍບໍ່ໄດ້ລະເລີຍຕໍ່ກົດລະບຽບຂອງພຣະອົງ.
142 ຄວາມຍຸດຕິທຳຂອງພຣະອົງຊົງເປັນຢູ່ຕະຫລອດໄປ
ແລະພຣະທຳຂອງພຣະອົງຊົງເປັນຈິງສະເໝີ.
143 ຂ້ານ້ອຍເຕັມໄປດ້ວຍຄວາມທຸກລຳບາກ ແລະຄວາມໂສກເສົ້າ
ແຕ່ວ່າກົດຂໍ້ຄຳສັ່ງຂອງພຣະອົງໄດ້ນຳເອົາຄວາມຍິນດີມາສູ່ຂ້ານ້ອຍ.
144 ຄຳສອນຂອງພຣະອົງມີຄວາມຈິງຕະຫລອດໄປ
ຊຶ່ງເຮັດໃຫ້ຂ້ານ້ອຍເຂົ້າໃຈ ແລະມີຊີວິດຢູ່.

## ຄຳອ້ອນວອນຂໍການຊົງຊ່ວຍກູ້ໃຫ້ພົ້ນໄພ

145 ຂ້ານ້ອຍຮ້ອງທູນດ້ວຍສິ້ນສຸດໃຈຂອງຂ້ານ້ອຍ
ຂ້າແດ່ພຣະເຈົ້າຂໍຊົງຕອບຂ້ານ້ອຍ
ຂ້ານ້ອຍຈະຖືຮັກສາກົດເກນຂອງພຣະອົງ
146 ຂ້ານ້ອຍຮ້ອງທູນພຣະອົງ ຂໍຊົງຊ່ວຍຂ້ານ້ອຍໃຫ້ລອດພົ້ນ
ເພື່ອຂ້ານ້ອຍຈະປະຕິບັດຕາມບັນດາພຣະທຳຂອງພຣະອົງ
147 ຂ້ານ້ອຍຕື່ນຂຶ້ນກ່ອນຕາເວັນໃນຍາມເຊົ້າ ທູນຂໍຄວາມຊ່ວຍເຫລືອ
ຂ້ານ້ອຍຫວັງໃຈໃນພຣະທຳຂອງພຣະອົງ
148 ດວງຕາຂອງຂ້ານ້ອຍມືນຢູ່ໃນທຸກໆຍາມ
ໃນກາງຄືນ ເພື່ອຕຶກຕອງພຣະທຳຂອງພຣະອົງ
149 ຂໍຊົງຟັງສຽງຂອງຂ້ານ້ອຍ ດ້ວຍຄວາມຮັກໝັ້ນຄົງຂອງພຣະອົງ
ຂ້າແດ່ພຣະເຈົ້າ
ຂໍຊົງຮັກສາຊີວິດຂອງຂ້ານ້ອຍໄວ້ຕາມກົດໝາຍຂອງພຣະອົງ
150 ຜູ້ຂົ່ມເຫັງຂ້ານ້ອຍດ້ວຍການມຸ້ງໝາຍໃຈເຂົ້າມາໃກ້ແລ້ວ
ພວກເຂົາຢູ່ຫ່າງຈາກພຣະທຳຂອງພຣະອົງ
151 ຂ້າແດ່ພຣະເຈົ້າ ແຕ່ພຣະອົງຊົງສະຖິດຢູ່ໃກ້
ແລະພຣະບັນຍັດທັງຫລາຍຂອງພຣະອົງກໍຈິງ
152 ຂ້ານ້ອຍຮູ້ມາດົນນານແລ້ວຈາກບັນດາພຣະໂອວາດຂອງພຣະອົງ
ວ່າພຣະອົງຊົງຕັ້ງໄວ້ເປັນນິດ

## ອ້ອນວອນຂໍຄວາມພົ້ນ

153 ຂໍພຣະອົງຊົງຫລຽວເບິ່ງຄວາມທຸກທໍລະມານຂອງຂ້ານ້ອຍ
ແລະຊ່ອຍຂ້ານ້ອຍໃຫ້ພົ້ນໄພດ້ວຍ
ເພາະວ່າຂ້ານ້ອຍບໍ່ໄດ້ປະລະພຣະທຳຂອງພຣະອົງ.
154 ຂໍຊົງຊ່ອຍວ່າຄະດີຂອງຂ້ານ້ອຍ ແລະໃຫ້ຂ້ານ້ອຍເປັນອິດສະຫລະ
ຂໍຊົງໂຜດໃຫ້ຂ້ານ້ອຍມີຊີວິດຢູ່ຕໍ່ໄປຕາມທີ່ພຣະອົງຊົງສັນຍາໄວ້.
155 ຄົນຊົ່ວຮ້າຍຈະບໍ່ໄດ້ຮັບການຊ່ອຍເຫລືອໃຫ້ພົ້ນ
ເພາະພວກເຂົາບໍ່ເຊື່ອຟັງພຣະທຳຂອງພຣະອົງ.
156 ຂ້າແດ່ພຣະຜູ້ເປັນເຈົ້າຄວາມເມດຕາສົງສານຂອງພຣະອົງຊົງຍິ່ງໃຫຍ່
ຂໍຊົງຊ່ອຍຂ້ານ້ອຍໃຫ້ພົ້ນໄພຕາມນໍ້າພຣະໄທຂອງພຣະອົງ.
157 ຂ້ານ້ອຍມີສັດຕູ ແລະມີຜູ້ຂົ່ມເຫັງຫລາຍ
ແຕ່ຂ້ານ້ອຍບໍ່ໄດ້ລະເລີຍໃນການເຊື່ອຟັງກົດຂໍ້ບັນຍັດຂອງພຣະອົງ.
158 ເມື່ອຂ້ານ້ອຍຫລຽວເບິ່ງພວກທໍລະຍົດນີ້ ຂ້ານ້ອຍກໍເບື່ອໜ່າຍເຕັມທົນ
ເພາະວ່າພວກເຂົາບໍ່ເຊື່ອຟັງກົດຂໍ້ຄຳສັ່ງຂອງພຣະອົງ.

159 ຂ້າແດ່ພຣະຜູ້ເປັນເຈົ້າພຣະອົງຊົງຮູ້ແລ້ວວ່າ
ຂ້ານ້ອຍມັກການສັ່ງສອນຂອງພຣະອົງຫລາຍເທົ່າໃດ
ຂໍຊົງໂຜດຊ່ອຍຂ້ານ້ອຍໃຫ້ພົ້ນໄພ
ຕາມຄວາມຮັກອັນໝັ້ນຄົງຂອງພຣະອົງເທີ້ນ.
160 ແກ່ນແທ້ຂອງພຣະທຳເປັນຄວາມຈິງ
ແລະກົດລະບຽບອັນສັດຈິງທັງໝົດຂອງພຣະອົງຊົງເປັນຢູ່ຕະຫລອດໄປ.

## ການຖວາຍຕົວເອງໃສ່ພຣະບັນຍັດຂອງພຣະເຈົ້າ

161 ເຈົ້ານາຍໄດ້ຂົ່ມເຫັງຂ້ານ້ອຍໂດຍບໍ່ມີເຫດຜົນ
ແຕ່ຈິດໃຈຂອງຂ້ານ້ອຍກໍສັ່ນສະເທືອນ ເພາະພຣະຄຳຂອງພຣະອົງ
162 ຂ້ານ້ອຍຊື່ນຊົມຍິນດີ ເພາະພຣະບັນຍັດຂອງພຣະອົງເໝືອນກັບ
ຜູ້ທີ່ພົບຂອງທີ່ຮິບໂຮມເອົາມາເປັນຈຳນວນຫລວງຫລາຍ
163 ຂ້ານ້ອຍກຽດຊັງຄວາມບໍ່ຈິງຫລອກລວງ
ແຕ່ຂ້ານ້ອຍຮັກພຣະທຳຂອງພຣະອົງ
164 ຂ້ານ້ອຍສັນລະເສີນພຣະອົງມື້ລະເຈັດເທື່ອ
ຍ້ອນເລື່ອງກົດໝາຍອັນຊອບທຳຂອງພຣະອົງ
165 ບຸກຄົນເຫລົ່ານັ້ນທີ່ຮັກພຣະທຳຂອງພຣະອົງ ມີສັນຕິສຸກໃຫຍ່ຫລວງ
ບໍ່ມີສິ່ງໃດເຮັດໃຫ້ພວກເຂົາສະດຸດໄດ້
166 ຂ້າແດ່ພຣະເຈົ້າຂ້ານ້ອຍຫວັງໃນຄວາມລອດພົ້ນຂອງພຣະອົງ
ແລະຂ້ານ້ອຍເຮັດຕາມພຣະບັນຍັດຂອງພຣະອົງ
167 ຈິດໃຈຂອງຂ້ານ້ອຍປະຕິບັດຕາມບັນດາພຣະໂອວາດຂອງພຣະອົງ
ຂ້ານ້ອຍຮັກພຣະໂອວາດນັ້ນອີ່ຫລີ
168 ຂ້ານ້ອຍປະຕິບັດຕາມຂໍ້ບັງຄັບ ແລະບັນດາພຣະໂອວາດຂອງພຣະອົງ
ເພາະທາງທັງຫລາຍຂອງພຣະອົງ ຢູ່ຕໍ່ເບື້ອງພຣະພັກຂອງພຣະອົງ

## ການອ້ອນວອນຂໍຄວາມຊ່ອຍເຫລືອ

169 ຂ້າແດ່ພຣະຜູ້ເປັນເຈົ້າ
ຂໍໃຫ້ການຮ້ອງໄຫ້ຂໍຄວາມຊ່ອຍເຫລືອຂອງຂ້ານ້ອຍໄປເຖິງພຣະອົງ
ຂໍຊົງໃຫ້ຂ້ານ້ອຍເຂົ້າໃຈຕາມທີ່ພຣະອົງຊົງສັນຍາໄວ້.
170 ຂໍພຣະອົງຊົງຮັບຟັງຄຳອ້ອນວອນຂອງຂ້ານ້ອຍ
ແລະຊ່ອຍໃຫ້ຂ້ານ້ອຍພົ້ນຈາກຄວາມລຳບາກ
ຕາມທີ່ພຣະອົງຊົງສັນຍາໄວ້.
171 ຂ້ານ້ອຍຈະສັນລະເສີນພຣະອົງຢູ່ເລື້ອຍໆ
ເພາະພຣະອົງຊົງສັ່ງສອນກົດລະບຽບຂອງພຣະອົງໃຫ້ແກ່ຂ້ານ້ອຍ.
172 ຂ້ານ້ອຍຈະຮ້ອງເພງເລື່ອງພຣະທຳຂອງພຣະອົງ

ເພາະຂໍ້ຄຳສັ່ງຂອງພຣະອົງຊົງຖືກຕ້ອງ.
173 ຂໍພຣະອົງຊົງຕຽມພ້ອມສະເໝີໃນການຊ່ອຍເຫລືອຂ້ານ້ອຍ
ເພາະວ່າຂ້ານ້ອຍຕິດຕາມຂໍ້ຄຳສັ່ງຂອງພຣະອົງ.
174 ຂ້າແດ່ພຣະຜູ້ເປັນເຈົ້າ ຂ້ານ້ອຍປາດຖະໜາການຊ່ອຍໃຫ້ພົ້ນຈາກພຣະອົງ
ຂ້ານ້ອຍພົບຄວາມສຸກໃນພຣະທຳຂອງພຣະອົງ.
175 ຂໍພຣະອົງຊົງປະທານຊີວິດໃຫ້ແກ່ຂ້ານ້ອຍ
ເພື່ອວ່າຂ້ານ້ອຍຈະສັນລະເສີນພຣະອົງ
ຂໍໃຫ້ຄຳສອນຂອງພຣະອົງຊົງຊ່ອຍເຫລືອຂ້ານ້ອຍດ້ວຍ.
176 ຂ້ານ້ອຍທ່ອງທ່ຽວໄປມາເໝືອນດັ່ງແກະທີ່ຫລົງທາງ
ສະນັ້ນ ຂໍພຣະອົງຊົງສະເດັດມາຮັກສາຂ້ານ້ອຍຜູ້ຮັບໃຊ້ຂອງພຣະອົງ
ເພາະວ່າຂ້ານ້ອຍບໍ່ໄດ້ປະລະກົດຂໍ້ບັນຍັດຂອງພຣະອົງ.

# ບົດທີ 120

## ການອ້ອນວອນຂໍຄວາມຊ່ອຍເຫລືອ

1 ເມື່ອຂ້ານ້ອຍຕົກຢູ່ໃນຄວາມທຸກຍາກລຳບາກ
ຂ້ານ້ອຍຮ້ອງຫາພຣະຜູ້ເປັນເຈົ້າ
ພຣະອົງກໍຊົງຕອບຂ້ານ້ອຍ.
2 ຂ້າແດ່ພຣະຜູ້ເປັນເຈົ້າ
ຂໍພຣະອົງຊົງຊ່ອຍໃຫ້ຂ້ານ້ອຍພົ້ນຈາກຄົນຂີ້ຕົວະ ແລະຫລອກລວງ.
3 ຄົນຂີ້ຕົວະເອີຍພຣະເຈົ້າຈະກະທຳປະການໃດແກ່ພວກເຈົ້າ?
ພຣະອົງຈະຊົງລົງໂທດພວກເຈົ້າຢ່າງໃດ?
4 ພຣະອົງຈະຊົງລົງໂທດພວກເຈົ້າ
ດ້ວຍລູກໜ້າທະນູອັນແຫລມຄົມຂອງທະຫານ
ແລະດ້ວຍຖ່ານໄຟແດງທີ່ລຸກຢູ່.
5 ການອາໄສຢູ່ກັບພວກເຈົ້ານີ້ກໍຍາກເທົ່າກັບການອາໄສຢູ່ນຳພວກເມເຊັກ
ຫລືທ່າມກາງຊາວເກດາ.
6 ຂ້ານ້ອຍໄດ້ອາໄສຢູ່ກັບພວກທີ່ກຽດຊັງຄວາມສະຫງົບສຸກ
ເປັນເວລາດົນນານແລ້ວ.
7 ເມື່ອຂ້ານ້ອຍເວົ້າເຖິງຄວາມສະຫງົບສຸກ
ພວກເຂົາກໍຢາກເຮັດສົງຄາມຂຶ້ນໂລດ.

# ບົດທີ 121

## ພຣະຜູ້ຊົງຄຸ້ມຄອງພວກເຮົາ

1 ຂ້ານ້ອຍຫລຽວຂຶ້ນໄປເທິງພູເຂົາທັງຫລາຍ
ເພື່ອຢາກຮູ້ວ່າການຊ່ອຍເຫລືອນັ້ນມາແຕ່ທາງໃດ.
2 ການຊ່ອຍເຫລືອຂ້ານ້ອຍມາຈາກ ພຣະຜູ້ເປັນເຈົ້າ
ຊຶ່ງເປັນພຣະຜູ້ສ້າງສະຫວັນຊັ້ນຟ້າ ແລະແຜ່ນດິນໂລກ.
3 ຂໍຢ່າຊົງເຮັດໃຫ້ຂ້ານ້ອຍອ່ອນແອ
ຂໍພຣະອົງຄຸ້ມຄອງຂ້ານ້ອຍ ແລະຢ່າຊົງນອນຫລັບໄປ.
4 ແມ່ນແລ້ວ ຜູ້ຄຸ້ມຄອງ ອິສຣາເອນ
ບໍ່ໄດ້ເຊືອບຫລັບໄປ.

5 ພຣະຜູ້ເປັນເຈົ້າ ຈະຊົງເຝົ້າຮັກສາເຈົ້າ
ພຣະອົງຈະຊົງຢູ່ຄຽງຂ້າງເພື່ອປ້ອງກັນເຈົ້າ.
6 ຕາເວັນຈະບໍ່ເປັນອັນຕະລາຍແກ່ເຈົ້າໃນເວລາກາງເວັນ
ດວງເດືອນຈະບໍ່ເປັນອັນຕະລາຍແກ່ເຈົ້າໃນເວລາກາງຄືນ.

7 ພຣະຜູ້ເປັນເຈົ້າ ຈະຄຸ້ມຄອງໃຫ້ພົ້ນຈາກອັນຕະລາຍທຸກຢ່າງ
ພຣະອົງຈະຊົງຊ່ອຍເຈົ້າໃຫ້ປອດໄພ.
8 ນັບແຕ່ເວລານີ້ໄປ
ເມື່ອເຈົ້າໄປໆມາໆພຣະອົງຈະຊົງຄຸ້ມຄອງເຈົ້າ.

# ບົດທີ 122

## ການຍ້ອງຍໍສໍລະເສີນນະຄອນເຢຣູຊາເລັມ

1 ຂ້ານ້ອຍມີຄວາມດີໃຈເມື່ອໝູ່ເພື່ອນຊວນຂ້ານ້ອຍວ່າ,
“ຂໍໃຫ້ພວກເຮົາໄປຍັງພຣະວິຫານຂອງ ພຣະຜູ້ເປັນເຈົ້າ.”
2 ແລະດຽວນີ້ ພວກຂ້ານ້ອຍກໍມາຮອດບ່ອນນີ້
ກຳລັງຢືນຢູ່ຂ້າງໃນປະຕູນະຄອນ ເຢຣູຊາເລັມ.

3 ນະຄອນ ເຢຣູຊາເລັມ ເປັນເມືອງທີ່ສ້ອມແຊມຂຶ້ນໃໝ່
ຢ່າງສວຍງາມ ແລະແໜ້ນໜາດີ.
4 ຊຶ່ງເປັນບ່ອນທີ່ພວກຕະກູນ ອິສຣາເອນ ຂຶ້ນໄປຢູ່ຮ່ວມກັນ
ພວກເຂົາໄດ້ພາກັນມາ ເພື່ອຖວາຍຂອບພຣະຄຸນ ພຣະຜູ້ເປັນເຈົ້າ
ຕາມທີ່ພຣະອົງໄດ້ຊົງສັ່ງໄວ້ແກ່ພວກເຂົາ.
5 ບ່ອນນີ້ເປັນສານຕັດສິນ
ບ່ອນທີ່ເຈົ້າຊີວິດຕັດສິນປະຊາຊົນ.

6 ຂໍໃຫ້ອ້ອນວອນເພື່ອຄວາມສະຫງົບສຸກຂອງນະຄອນ ເຢຣູຊາເລັມ ດັ່ງນີ້ວ່າ
ຂໍໃຫ້ບັນດາຜູ້ທີ່ຮັກຈົ່ງມີຄວາມຈະເລີນຮຸ່ງເຮືອງ.
7 ຂໍໃຫ້ພາຍໃນກຳແພງເມືອງຂອງເຈົ້າຈົ່ງມີແຕ່ຄວາມສະຫງົບສຸກ
ແລະພາຍໃນວັງຂອງເຈົ້າຈົ່ງມີແຕ່ຄວາມປອດໄພ.
8 ເພື່ອເຫັນແກ່ໝູ່ເພື່ອນ ແລະມິດສະຫາຍ
ຂ້ານ້ອຍຂໍອວຍພອນນະຄອນ ເຢຣູຊາເລັມວ່າ,
"ຄວາມສະຫງົບສຸກຈົ່ງມີແກ່ເຈົ້າ."
9 ເພື່ອເຫັນແກ່ພຣະວິຫານຂອງ ພຣະຜູ້ເປັນເຈົ້າ ຂອງພວກເຮົາ
ຂ້ານ້ອຍຂໍອ້ອນວອນເພື່ອຄວາມຈະເລີນຮຸ່ງເຮືອງຂອງເຈົ້າ.

# ບົດທີ 123

## ຄົນທີ່ຕາມທາງຂອງພຣະເຈົ້າໝັ້ນໃຈໃນພຣະອົງ

*ບົດເພງໃຊ້ແຫ່ຂຶ້ນ*

1 ຂ້າແດ່ພຣະອົງຜູ້ປະທັບໃນຟ້າສະຫວັນ ຂ້ານ້ອຍເງີຍໜ້າເບິ່ງພຣະອົງ
2 ເບິ່ງແມ ຕາຂອງຜູ້ຮັບໃຊ້ເບິ່ງມືນາຍຂອງຕົນສັນໃດ
ແລະຕາຂອງສາວໃຊ້ເບິ່ງມືນາຍຍິງຂອງຕົນສັນໃດ
ຕາຂອງຂ້ານ້ອຍທັງຫລາຍເບິ່ງ ພຣະຜູ້ເປັນເຈົ້າ
ພຣະເຈົ້າ ຂອງຂ້ານ້ອຍທັງຫລາຍຈົນກວ່າພຣະອົງຈະມີພຣະກະລຸນາ
ຕໍ່ຂ້ານ້ອຍທັງຫລາຍສັນນັ້ນ

3 ຂ້າແດ່ ພຣະຜູ້ເປັນເຈົ້າ ຂໍພຣະກະລຸນາຕໍ່ພວກຂ້ານ້ອຍ
ຂໍພຣະກະລຸນາຕໍ່ພວກຂ້ານ້ອຍເຖີດພຣະເຈົ້າຂ້າ
ເພາະພວກຂ້ານ້ອຍອົດກັ້ນຕໍ່ຄວາມໝິ່ນປະໝາດ
4 ຈິດໃຈຂອງຂ້ານ້ອຍທັງຫລາຍອົດກັ້ນຕໍ່ຄຳເຍາະເຍີ້ຍ
ຂອງຄົນທີ່ຢູ່ສະບາຍ ຄືການໝິ່ນປະໝາດຂອງຄົນຈອງຫອງ

# ບົດທີ 124

## ພຣະຜູ້ຊ່ອຍໃຫ້ພົ້ນໄພຂອງອິສຣາເອນ

1 "ຖ້າວ່າ ພຣະຜູ້ເປັນເຈົ້າ ບໍ່ຊົງສະຖິດຄຽງຂ້າງພວກເຮົາ"
ຂໍໃຫ້ອິສຣາເອນກ່າວວ່າ,
2 "ຖ້າວ່າ ພຣະຜູ້ເປັນເຈົ້າ ບໍ່ຊົງສະຖິດຄຽງຂ້າງພວກເຮົາ
ເມື່ອພວກສັດຕູມາໂຈມຕີ
3 ແລະຄຽດແຄ້ນພວກເຮົາຢ່າງຮຸນແຮງ
ພວກມັນກໍຈະກືນກິນພວກເຮົາທັງເປັນ

4 ແລ້ວກະແສນໍ້າລົ້ນກໍຈະໄຫລພັດພວກເຮົາອອກໄປ
ພວກເຮົາກໍຕ້ອງຈົມລົງໄປໃນນໍ້າ
5 ແລະກະແສນໍ້າທີ່ແຮງກໍໄຫລຖ້ວມພວກເຮົາ”
6 ຂໍໃຫ້ພວກເຮົາຂອບພຣະຄຸນ ພຣະຜູ້ເປັນເຈົ້າ
ຜູ້ທີ່ບໍ່ຊົງອະນຸຍາດໃຫ້ສັດຕູທຳລາຍພວກເຮົາ
7 ພວກເຮົາໄດ້ປົບໜີໄປເໝືອນກັບນົກທີ່ຫລຸດໜີຈາກບ້ວງແຮ້ວ
ບ້ວງແຮ້ວໄດ້ຂາດໄປ ແລະພວກເຮົາກໍໄດ້ເປັນອິດສະຫລະ
8 ການຊົດຊ່ອຍຂອງພວກເຮົາມາຈາກ ພຣະຜູ້ເປັນເຈົ້າ
ຊຶ່ງເປັນພຣະຜູ້ສ້າງສະຫວັນຊັ້ນຟ້າ ແລະໂລກ

# ບົດທີ 125

## ຜູ້ທີ່ວາງໃຈໃນພຣະເຈົ້າຢູ່ຢ່າງປອດໄພ

*ບົດເພງໃຊ້ແຫ່ຂຶ້ນ*

1 ບັນດາຜູ້ທີ່ວາງໃຈໃນ ພຣະຜູ້ເປັນເຈົ້າ ກໍເໝືອນກັບພູຊີໂອນ ຊຶ່ງບໍ່ຫວັ່ນໄຫວ
ແຕ່ດຳລົງຢູ່ເປັນນິດ
2 ພູເຂົາຢູ່ຮອບ ເຢຣູຊາເລັມ ສັນໃດ
ພຣະຜູ້ເປັນເຈົ້າ ຢູ່ຮອບປະຊາຊົນຂອງພຣະອົງ
ຕັ້ງແຕ່ເວລານີ້ສືບຕໍ່ໄປເປັນນິດສັນນັ້ນ
3 ເພາະອຳນາດຂອງຄົນຊົ່ວຈະບໍ່ພັກຢູ່ເໜືອແຜ່ນດິນທີ່ຕົກ
ເປັນສ່ວນຂອງຄົນຊອບທຳ
ຢ້ານວ່າຄົນຊອບທຳຈະຍື່ນມືອອກເຮັດຄວາມຊົ່ວຊ້າ

### ຄຳອະທິຖານ

4 ຂ້າແດ່ ພຣະຜູ້ເປັນເຈົ້າ ຂໍປະກອບການດີຕໍ່ຜູ້ເຮັດດີ
ແລະຕໍ່ຜູ້ທ່ຽງທຳໃນຈິດໃຈຂອງຕົນ
5 ແຕ່ບັນດາຜູ້ທີ່ຫັນເຂົ້າຫາທາງຄົດຂອງຕົນ
ພຣະຜູ້ເປັນເຈົ້າ ຈະພາຄົນນັ້ນໄປພ້ອມກັບຄົນເຮັດຄວາມຊົ່ວຊ້າ
ແຕ່ສັນຕິສຸກຈະມີຢູ່ໃນ ອິສຣາເອນ

# ບົດທີ 126

## ການອ້ອນວອນເມື່ອຖືກປົດປ່ອຍ

1 ເມື່ອ ພຣະຜູ້ເປັນເຈົ້າ ຊົງນຳພວກຂ້ານ້ອຍກັບຄືນສູ່ເມືອງຊີໂອນ ນັ້ນ
ມັນເປັນເໝືອນຄວາມຝັນ.
2 ພວກຂ້ານ້ອຍໄດ້ຫົວ ແລະຮ້ອງເພງດ້ວຍຄວາມຍິນດີທີ່ສຸດ

ແລ້ວຊົນຊາດອື່ນໆ ກໍເວົ້າເຖິງເລື່ອງພວກຂ້ານ້ອຍວ່າ,
"ພຣະຜູ້ເປັນເຈົ້າຊົງກະທຳການຍິ່ງໃຫຍ່ສຳລັບພວກເຂົາແລ້ວ."
3 ເປັນຄວາມຈິງ ພຣະອົງຊົງກະທຳການຍິ່ງໃຫຍ່ສຳລັບພວກຂ້ານ້ອຍ
ພວກຂ້ານ້ອຍມີຄວາມຍິນດີຫລາຍທີ່ສຸດ.
4 ຂ້າແດ່ພຣະຜູ້ເປັນເຈົ້າ
ຂໍຊົງພາພວກຂ້ານ້ອຍກັບຄືນສູ່ປະເທດຂອງພວກຂ້ານ້ອຍ
ເໝືອນດັ່ງພຣະອົງຊົງໃຫ້ນໍ້າໄຫລກັບຄືນມາໃນຫ້ວຍທີ່ຂາດນໍ້າ.
5 ຂໍໃຫ້ຜູ້ທີ່ຮ້ອງໄຫ້ເສຍໃຈໃນຂະນະທີ່ພວກເຂົາປູກຝັງນັ້ນ
ໄດ້ກ່ຽວເຂົ້າດ້ວຍຄວາມຍິນດີ.

6 ຜູ້ທີ່ຮ້ອງໄຫ້ໃນເວລາທີ່ອອກໄປຫວ່ານກ້າ
ຈະນຳເອົາຜົນລະປູກກັບມາດ້ວຍການຮ້ອງເພງຢ່າງມ່ວນຊື່ນ.

# ບົດທີ 127

## ການສັນລະເສີນຄວາມດີຂອງພຣະຜູ້ເປັນເຈົ້າ

1 ວຽກການຂອງຄົນກໍ່ສ້າງເຮືອນກໍໄຮ້ປະໂຫຍດ
ຖ້າວ່າພຣະຜູ້ເປັນເຈົ້າບໍ່ເປັນຜູ້ຊົງສ້າງ
ທະຫານຍືນຍາມກໍ່ໄຮ້ປະໂຫຍດ
ຖ້າວ່າພຣະຜູ້ເປັນເຈົ້າບໍ່ຊົງປ້ອງກັນບ້ານເມືອງໄວ້.
2 ການເຮັດວຽກໜັກເພື່ອລ້ຽງຊີວິດ
ຄືຜູ້ນອນເດິກລຸກເຊົ້າກໍ່ໄຮ້ປະໂຫຍດ
ເພາະວ່າພຣະຜູ້ເປັນເຈົ້າຊົງປະທານການພັກຜ່ອນໃຫ້ແກ່ຜູ້ທີ່ພຣະອົງຊົງຮັກ.

3 ເດັກນ້ອຍທັງຫລາຍເປັນພຣະພອນອັນແທ້ຈິງ
ທີ່ພຣະຜູ້ເປັນເຈົ້າຊົງປະທານໃຫ້.
4 ຜູ້ທີ່ມີລູກເມື່ອຕົນຍັງໜຸ່ມກໍມີປະໂຫຍດຫລາຍ
ເໝືອນທະຫານທີ່ມີລູກທະນູຫລາຍໃນກຳມື.
5 ຜູ້ນັ້ນຈະມີຄວາມສຸກ
ເມື່ອລາວປະເຊີນໜ້າກັບສັດຕູທັງຫລາຍໃນສານຕັດສິນ
ລາວຈະບໍ່ພ່າຍແພ້ຈັກເທື່ອ.

# ບົດທີ 128

## ພຣະພອນສຳລັບຄອບຄົວທີ່ສັດຊື່

*ບົດເພງໃຊ້ແຫ່ຂຶ້ນ*

1 ທຸກຄົນທີ່ຢຳເກງພຣະຜູ້ເປັນເຈົ້າກໍເປັນສຸກ

ຄືຜູ້ທີ່ດຳເນີນໃນເສັ້ນທາງຂອງພຣະອົງ
2 ເພາະເຈົ້າຈະໄດ້ກິນຜົນຈາກນໍ້າມືຂອງເຈົ້າ ເຈົ້າຈະເປັນສຸກ
ແລະເຈົ້າຈະຢູ່ເຢັນເປັນສຸກ
3 ເມຍຂອງເຈົ້າຈະເປັນເໝືອນກັບເຄືອອະງຸ່ນໝາກດົກຢູ່ຂ້າງເຮືອນຂອງເຈົ້າ
ລູກໆຂອງເຈົ້າຈະເປັນເໝືອນໜໍ່ໝາກກອກເທດຮອບໂຕະຂອງເຈົ້າ
4 ເບິ່ງແມ ຄົນທີ່ຢຳເກງພຣະຜູ້ເປັນເຈົ້າຈະໄດ້ຮັບພຣະພອນດັ່ງນີ້ແຫລະ
5 ພຣະຜູ້ເປັນເຈົ້າຈະອຳນວຍພຣະພອນເຈົ້າຈາກຊີໂອນ
ແລະເຈົ້າຈະເຫັນຄວາມຈະເລີນຂອງເຢຣູຊາເລັມ
ຕະຫລອດຊີວິດຂອງເຈົ້າ
6 ເອີ ເຈົ້າຈະເຫັນລູກຫລານຂອງເຈົ້າ
ແລະສັນຕິສຸກມີຢູ່ໃນອິສຣາເອນ

# ບົດທີ 129

## ການສັນລະເສີນພຣະເຈົ້າ ເພາະພຣະອົງຊ່ວຍອິສຣາເອນໃຫ້ລອດພົ້ນ

*ບົດເພງໃຊ້ແຫ່ຂຶ້ນ*

1 "ພວກເຂົາໄດ້ໃຫ້ຂ້ານ້ອຍທຸກຍາກຫລາຍເທື່ອຕັ້ງແຕ່ໜຸ່ມໆມາ"
ໃຫ້ອິສຣາເອນກ່າວວ່າ
2 "ພວກເຂົາໄດ້ໃຫ້ຂ້ານ້ອຍທຸກຍາກຫລາຍເທື່ອຕັ້ງແຕ່ໜຸ່ມໆມາ
ແຕ່ພວກເຂົາຍັງເອົາຊະນະຂ້ານ້ອຍບໍ່ໄດ້
3 ຄົນທີ່ໄຖກໍໄດ້ໄຖເທິງຫລັງຂ້ານ້ອຍ ພວກເຂົາເຮັດຮອຍໄຖຂອງພວກເຂົາໃຫ້ຍາວ"
4 ພຣະຜູ້ເປັນເຈົ້າຊອບທຳ ພຣະອົງຕັດເຄືອງຈຳຈອງຂອງຄົນຊົ່ວອອກ
5 ຂໍໃຫ້ບັນດາຜູ້ທີ່ກຽດຊັງຊີໂອນໄດ້ອັບອາຍຂາຍໜ້າ ແລະຕ້ອງຖອຍກັບໄປ
6 ໃຫ້ພວກເຂົາເປັນເໝືອນຫຍ້າທີ່ງອກເທິງຫລັງຄາເຮືອນ
ຊຶ່ງຫ່ຽວແຫ້ງໄປກ່ອນມັນໃຫຍ່ຂຶ້ນ
7 ຊຶ່ງຄົນກ່ຽວບໍ່ເກັບໃສ່ມື ຫລືຄົນທີ່ມັດຟ່ອນບໍ່ເກັບໄວ້ທີ່ເອິກຂອງຕົນ
8 ທັງຄົນທີ່ຜ່ານໄປບໍ່ເວົ້າວ່າ
"ຂໍພຣະພອນຂອງພຣະຜູ້ເປັນເຈົ້າຢູ່ເທິງເຈົ້າທັງຫລາຍ
ເຮົາອວຍພອນເຈົ້າທັງຫລາຍໃນພຣະນາມພຣະຜູ້ເປັນເຈົ້າ"

# ບົດທີ 130

## ການອ້ອນວອນຂໍຄວາມຊ່ອຍເຫລືອ

1 ຂ້າແດ່ພຣະຜູ້ເປັນເຈົ້າ ເມື່ອຂ້ານ້ອຍຂາດຄວາມຫວັງ
ຂ້ານ້ອຍຮ້ອງຫາພຣະອົງ.

2 ຂໍຟັງສຽງຮ້ອງຂໍຂອງຂ້ານ້ອຍ
ແລະຮັບຟັງຂ້ານ້ອຍທູນຂໍຄວາມຊ່ອຍເຫລືອດ້ວຍ.
3 ຖ້າພຣະອົງຊົງບັນທຶກຄວາມບາບຂອງພວກຂ້ານ້ອຍໄວ້
ແມ່ນໃຜໃນພວກຂ້ານ້ອຍຈະສາມາດໜີພົ້ນຈາກການລົງໂທດນີ້ໄດ້?
4 ແຕ່ວ່າພຣະອົງຊົງໃຫ້ອະໄພແກ່ພວກຂ້ານ້ອຍ
ເພື່ອພວກຂ້ານ້ອຍຈະຢຳເກງພຣະອົງ.

5 ຂ້ານ້ອຍຄອງຄອຍຖ້າພຣະຜູ້ເປັນເຈົ້າດ້ວຍສຸດອົກສຸດໃຈ
ແລະຂ້ານ້ອຍເຊື່ອໃນພຣະທຳຂອງພຣະອົງ.
6 ຂ້ານ້ອຍຄອຍຖ້າພຣະຜູ້ເປັນເຈົ້າດ້ວຍຄວາມຮ້ອນຮົນ
ຍິ່ງກວ່າຜູ້ທີ່ເຝົ້າຍາມທີ່ຄອຍຖ້າຢາກໃຫ້ແຈ້ງ.
7 ພວກອິສຣາເອນເອີຍ ຈົ່ງເຊື່ອພຣະຜູ້ເປັນເຈົ້າ
ເພາະຄວາມຮັກຂອງພຣະອົງຊົງໝັ້ນຄົງ
ແລະພຣະອົງຊົງຕັ້ງພຣະໄທຊ່ອຍໃຫ້ພົ້ນຢູ່ທຸກເວລາ.
8 ພຣະອົງຊົງຊ່ອຍພວກອິສຣາເອນທີ່ເປັນໄພ່ພົນຂອງພຣະອົງ
ໃຫ້ພົ້ນຈາກຄວາມບາບທຸກຢ່າງຂອງພວກເຂົາ.

## ບົດທີ 131

### ດາວິດຖ່ອມໃຈລົງ ແລະຕັກເຕືອນອິສຣາເອນ

*ບົດເພງໃຊ້ແຫ່ຂຶ້ນຂອງດາວິດ*

1 ຂ້າແດ່ພຣະຜູ້ເປັນເຈົ້າຈິດໃຈຂອງຂ້ານ້ອຍບໍ່ໄດ້ອວດອົ່ງ
ແລະໃນຕາຂອງຂ້ານ້ອຍບໍ່ໄດ້ຍິ່ງຈອງຫອງ
ຂ້ານ້ອຍບໍ່ໄດ້ໄປຫຍຸ້ງກ່ຽວກັບເລື່ອງໃຫຍ່ໂຕ
ຫລືເລື່ອງອັດສະຈັນເກີນຕົວຂອງຂ້ານ້ອຍ
2 ແຕ່ຂ້ານ້ອຍໄດ້ສະຫງົບ ແລະລະງັບຈິດໃຈຂອງຂ້ານ້ອຍ
ເໝືອນຢ່າງເດັກນ້ອຍທີ່ປະນົມແມ່ຂອງຕົນແລ້ວ
ຈິດໃຈຂອງຂ້ານ້ອຍເປັນເໝືອນກັບເດັກນ້ອຍທີ່ປະນົມແລ້ວ

3 ຈົ່ງໃຫ້ອິສຣາເອນຫວັງໃຈໃນພຣະຜູ້ເປັນເຈົ້າຕັ້ງ
ແຕ່ເວລາບັດນີ້ສືບໄປເປັນນິດ

## ບົດທີ 132

### ການສັນລະເສີນໃນສະຖານທີ່ນະມັດສະການພຣະເຈົ້າ

*ບົດເພງໃຊ້ແຫ່ຂຶ້ນຂອງດາວິດ*

1 ຂ້າແດ່ພຣະຜູ້ເປັນເຈົ້າຂໍພຣະອົງຢ່າຊົງຫລົງລືມກະສັດດາວິດ

ແລະວຽກງານທຸກຢ່າງທີ່ເພິ່ນໄດ້ເຮັດມາ.
2 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍພຣະອົງຊົງລະນຶກເຖິງຄຳສັນຍາ ແລະຄຳສາບານ
ທີ່ເພິ່ນມີຕໍ່ພຣະຜູ້ເປັນເຈົ້າ ອົງຊົງມີອຳນາດຍິ່ງໃຫຍ່
ຂອງພວກອິສຣາເອນດັ່ງນີ້.
3 ຂ້ານ້ອຍຈະບໍ່ເຂົ້າໄປໃນເຮືອນ ຫລືເຂົ້າໄປນອນ
4 ຂ້ານ້ອຍຈະບໍ່ພັກຜ່ອນ ຫລືຫລັບນອນ.
5 ຈົນກວ່າຂ້ານ້ອຍໄດ້ຈັດຕຽມບ່ອນສຳລັບພຣະຜູ້ເປັນເຈົ້າ
ແລະທີ່ປະທັບສຳລັບພຣະເຈົ້າອົງຊົງມີອຳນາດຍິ່ງໃຫຍ່
ຂອງພວກອິສຣາເອນ.

6 ພວກຂ້ານ້ອຍໄດ້ຍິນເຖິງເລື່ອງຫີບຄຳສັນຍາຢູ່ເມືອງເອຟຣາທາ
ແລະໄດ້ພົບຫີບນີ້ຢູ່ໃນທົ່ງຫຍ້າຢາອານ.
7 ພວກຂ້ານ້ອຍຈຶ່ງໄດ້ເວົ້າວ່າ
ຂໍໃຫ້ພວກເຮົາໄປທີ່ປະທັບຂອງພຣະຜູ້ເປັນເຈົ້າ
ແລະເຂົ້າເຝົ້ານະມັດສະການຕໍ່ໜ້າພຣະທີ່ນັ່ງຂອງພຣະອົງ.
8 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍພຣະອົງສະເດັດມາຍັງບ່ອນພັກຜ່ອນຂອງພຣະອົງ
ພ້ອມກັບຫີບຄຳສັນຍາ
ຊຶ່ງເປັນສັນຍາລັກແຫ່ງອຳນາດຂອງພຣະອົງ.
9 ຂໍໃຫ້ພວກປະໂລຫິດປະກອບດ້ວຍຄວາມຊອບທຳ
ຂໍໃຫ້ໄພ່ພົນຂອງພຣະອົງທຸກຄົນໂຮຮ້ອງດ້ວຍຄວາມຍິນດີ.
10 ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງຊົງສັນຍາກັບດາວິດຜູ້ຮັບໃຊ້ຂອງພຣະອົງ
ຂໍພຣະອົງຢ່າຊົງປະຕິເສດເຈົ້າຊີວິດທີ່ພຣະອົງຊົງເລືອກໄວ້.

11 ພຣະອົງຊົງສັນຍາຢ່າງໝັ້ນຄົງຕໍ່ດາວິດວ່າ,
"ພາຍຫລັງເຈົ້ານີ້ ເຮົາຈະແຕ່ງຕັ້ງລູກຊາຍຂອງເຈົ້າໃຫ້ຂຶ້ນປົກຄອງ.
12 ຖ້າວ່າລູກຫລານຂອງເຈົ້າສັດຊື່ຕໍ່ຄຳໝັ້ນສັນຍາຂອງເຮົາ
ແລະຂໍ້ຄຳສັ່ງທີ່ເຮົາໄດ້ໃຫ້ແກ່ພວກເຂົາ
ບັນດາລູກຊາຍຂອງພວກເຂົາຈະເປັນເຈົ້າຊີວິດປົກຄອງ
ຄືກັບເຈົ້າສືບຕໍ່ກັນໄປ"
ພຣະອົງຈະບໍ່ຖອນຄຳສັນຍານີ້ຄືນ.

13 ພຣະຜູ້ເປັນເຈົ້າຊົງເລືອກເມືອງຊີໂອນໄວ້
ພຣະອົງມີພຣະປະສົງສ້າງທີ່ປະທັບຂອງພຣະອົງໄວ້ທີ່ນັ້ນ
ຄືພຣະອົງຊົງກ່າວວ່າ,
14 "ນີ້ແມ່ນບ່ອນທີ່ເຮົາຢາກຢູ່

ແລະເປັນບ່ອນທີ່ເຮົາຢາກປົກຄອງຕະຫລອດໄປ.
15 ເຮົາຈະຈັດຕຽມເມືອງຊີໂອນນີ້ໄວ້ໃຫ້ອຸດົມສົມບູນ
ເຮົາຈະເອົາສະບຽງອາຫານໃຫ້ຄົນທຸກຍາກໃນເມືອງນີ້.
16 ເຮົາຈະໃຫ້ພວກປະໂລຫິດຂອງເມືອງນີ້ປະກາດວ່າ
ເຮົາເປັນຜູ້ຊ່ອຍໃຫ້ພົ້ນໄພ
ແລ້ວປະຊາຊົນຈະຮ້ອງເພງໂຮຮ້ອງດ້ວຍຄວາມຍິນດີ.
17 ໃນເມືອງນີ້ເຮົາຈະແຕ່ງຕັ້ງຜູ້ໜຶ່ງໃນເຊື້ອສາຍຂອງດາວິດ
ເປັນເຈົ້າຊີວິດອົງຍິ່ງໃຫຍ່
ແລະເຮົາຈະໃຫ້ເຈົ້າຊີວິດອົງນີ້ເປັນຜູ້ປົກຄອງ.
18 ເຮົາຈະເຮັດໃຫ້ສັດຕູຂອງລາວໄດ້ຮັບຄວາມອັບອາຍ
ແຕ່ວ່າລາຊະອານາຈັກຂອງລາວຈະຮຸ່ງເຮືອງ ແລະອຸດົມສົມບູນ.”

# ບົດທີ 133

## ພຣະພອນແຫ່ງຄວາມເປັນນໍ້າໜຶ່ງໃຈດຽວກັນ

1 ເບິ່ງແມ ຊຶ່ງພີ່ນ້ອງອາໄສຢູ່ນຳກັນເປັນນໍ້າໜຶ່ງໃຈດຽວກັນ
ກໍເປັນການດີ ແລະໜ້າຊື່ນໃຈຫລາຍຈັກເທົ່າໃດ
2 ເໝືອນກັບນໍ້າມັນປະເສີດຢູ່ເທິງຫົວໄຫລອາບລົງມາເທິງໜວດເຄົາ
ເທິງໜວດເຄົາຂອງອາໂຣນໄຫລອາບລົງມາເທິງຄໍເສື້ອຂອງເພິ່ນ
3 ເໝືອນກັບນໍ້າໝອກຂອງພູເຂົາເຮີໂມນ
ເໝືອນກັບນໍ້າໝອກຊຶ່ງຕົກລົງເທິງພູເຂົາຊີໂອນ ເພາະວ່າພຣະຜູ້ເປັນເຈົ້າ
ບັງຄັບບັນຊາພຣະພອນຢູ່ບ່ອນນັ້ນ ຄືຊີວິດຈະເລີນເປັນນິດ

# ບົດທີ 134

## ຄຳຕັກເຕືອນໃຫ້ສັນລະເສີນພຣະເຈົ້າ

*ບົດເພງໃຊ້ແຫ່ຂຶ້ນ*

1 ມາແມ ມາຖວາຍສາທຸການແດ່ພຣະຜູ້ເປັນເຈົ້າ
ບັນດາຜູ້ຮັບໃຊ້ທັງໝົດຂອງພຣະຜູ້ເປັນເຈົ້າ
ຜູ້ຢືນຢູ່ໃນພຣະນິເວດຂອງພຣະຜູ້ເປັນເຈົ້າໃນກາງຄືນ
2 ຈົ່ງຍົກມືຂອງເຈົ້າຂຶ້ນໃນສະຖານທີ່ບໍລິສຸດ
ແລະຖວາຍສາທຸການແດ່ພຣະຜູ້ເປັນເຈົ້າ
3 ຂໍພຣະຜູ້ເປັນເຈົ້າອຳນວຍພຣະພອນແກ່ເຈົ້າຈາກຊີໂອນ
ຄືພຣະອົງຜູ້ສ້າງຟ້າສະຫວັນ ແລະແຜ່ນດິນໂລກ

# ບົດທີ 135

## ຄຳຕັກເຕືອນໃຫ້ສັນລະເສີນພຣະເຈົ້າ

1 ຈົ່ງສັນລະເສີນ ພຣະຜູ້ເປັນເຈົ້າ
ຈົ່ງສັນລະເສີນພຣະນາມຂອງ ພຣະຜູ້ເປັນເຈົ້າ
ບັນດາຜູ້ຮັບໃຊ້ຂອງ ພຣະຜູ້ເປັນເຈົ້າ ເອີຍ ຈົ່ງສັນລະເສີນພຣະອົງ
2 ຜູ້ທີ່ຢືນຢູ່ໃນພຣະນິເວດຂອງ ພຣະຜູ້ເປັນເຈົ້າ
ທີ່ຢູ່ໃນບໍລິເວນພຣະນິເວດຂອງ ພຣະເຈົ້າ ຂອງເຮົາ
3 ຈົ່ງສັນລະເສີນ ພຣະຜູ້ເປັນເຈົ້າ ເພາະ ພຣະຜູ້ເປັນເຈົ້າປະເສີດ
ຈົ່ງຮ້ອງເພງສັນລະເສີນພຣະນາມຂອງພຣະອົງ
ເພາະການກະທຳນັ້ນເຮັດໃຫ້ສະບາຍໃຈ
4 ເພາະ ພຣະຜູ້ເປັນເຈົ້າ ເລືອກຢາໂຄບ ໄວ້ສຳລັບພຣະອົງເອງ
ເລືອກອິສຣາເອນ ໄວ້ເປັນກຳມະສິດຂອງພຣະອົງ

5 ເພາະຂ້ານ້ອຍຮູ້ວ່າ ພຣະຜູ້ເປັນເຈົ້າຍິ່ງໃຫຍ່
ແລະອົງ ພຣະຜູ້ເປັນເຈົ້າ ຂອງເຮົາຍິ່ງໃຫຍ່ກວ່າພະອື່ນທັງໝົດ
6 ພຣະຜູ້ເປັນເຈົ້າ ພໍພຣະໄທສິ່ງໃດ
ພຣະອົງກໍກະທຳໃນຟ້າສະຫວັນ ແລະເທິງແຜ່ນດິນໂລກ
ໃນທະເລແລະທີ່ນໍ້າເລິກທັງໝົດ
7 ພຣະອົງເຮັດໃຫ້ເມກຟູຂຶ້ນມາຈາກທີ່ສຸດປາຍແຜ່ນດິນໂລກ
ພຣະອົງເຮັດຟ້າແລບໃຫ້ແກ່ຝົນ ແລະນຳລົມອອກມາຈາກຄັງຂອງພຣະອົງ

8 ພຣະອົງຄືຜູ້ສັງຫານລູກຫົວປີຂອງ ເອຢິບ ທັງຂອງຄົນແລະຂອງສັດ
9 ເອຢິບ ເອີຍ ຜູ້ຊົງໃຫ້ໝາຍສຳຄັນ ແລະການອັດສະຈັນທ່າມກາງເຈົ້າ
ໃຫ້ຕໍ່ສູ້ກັບ ຟາຣາໂອ ແລະບັນດາຂ້າລາຊະການຂອງເຈົ້າ
10 ພຣະອົງຄືຜູ້ຕີປະຊາຊາດໃຫຍ່ໂຕ ແລະສັງຫານກະສັດຜູ້ມີລິດ
11 ຄືສີໂຮນກະສັດຂອງຄົນ ອະໂມຣິດ ແລະ ໂອກກະສັດຂອງ ເມືອງ ບາຊານ
ແລະບັນດາລາຊະອານາຈັກແຫ່ງ ການາອານ
12 ແລະປະທານແຜ່ນດິນຂອງພວກເຂົາທັງຫລາຍໃຫ້ເປັນມໍລະດົກ
ເປັນມໍລະດົກແກ່ອິສຣາເອນ ປະຊາຊົນຂອງພຣະອົງ

13 ຂ້າແດ່ ພຣະຜູ້ເປັນເຈົ້າພຣະນາມຂອງພຣະອົງດຳລົງເປັນນິດ
ຂ້າແດ່ ພຣະຜູ້ເປັນເຈົ້າການລະນຶກເຖິງພຣະອົງດຳລົງຢູ່ທຸກຊົ່ວອາຍຸຄົນ
14 ເພາະ ພຣະຜູ້ເປັນເຈົ້າ ຈະແກ້ແທນປະຊາຊົນຂອງພຣະອົງ
ແລະຊົງມີພຣະໄທໃນເລື່ອງບັນດາຜູ້ຮັບໃຊ້ຂອງພຣະອົງ

## ບັນດາຮູບເຄົາລົບບໍ່ມີປະໂຫຍດ

15 ຮູບເຄົາລົບຂອງບັນດາປະຊາຊາດເປັນເງິນ ແລະທອງຄຳ
ເປັນຫັດຖະກຳຂອງມະນຸດ
16 ຮູບເຫລົ່ານັ້ນມີປາກ ແຕ່ເວົ້າບໍ່ໄດ້ ມີຕາ ແຕ່ເບິ່ງບໍ່ໄດ້
17 ມີຫູ ແຕ່ຟັງບໍ່ໄດ້ຍິນ ທັງບໍ່ມີລົມຫາຍໃຈໃນປາກຂອງຮູບນັ້ນ
18 ຜູ້ທີ່ເຮັດຮູບນັ້ນກໍເປັນເໝືອນຮູບເຫລົ່ານັ້ນ ເອີ
ບັນດາຜູ້ທີ່ວາງໃຈໃນຮູບນັ້ນກໍເຊັ່ນກັນ

19 ວົງວານ ອິສຣາເອນ ເອີຍ ຈົ່ງຖວາຍສາທຸການແດ່ ພຣະຜູ້ເປັນເຈົ້າ
ວົງວານ ອາໂຣນ ເອີຍ ຈົ່ງຖວາຍສາທຸການແດ່ ພຣະຜູ້ເປັນເຈົ້າ
20 ວົງວານ ເລວີ ເອີຍ ຈົ່ງຖວາຍສາທຸການແດ່ ພຣະຜູ້ເປັນເຈົ້າ
ຜູ້ທີ່ຢຳເກງ ພຣະຜູ້ເປັນເຈົ້າ ຈົ່ງຖວາຍສາທຸການແດ່ ພຣະຜູ້ເປັນເຈົ້າ
21 ສາທຸການແດ່ ພຣະຜູ້ເປັນເຈົ້າ ຈາກຊີໂອນ ພຣະອົງຜູ້ປະທັບຢູ່ໃນ ເຢຣູຊາເລັມ
ຈົ່ງສັນເສີນ ພຣະຜູ້ເປັນເຈົ້າ ເຖີດ

# ບົດທີ 136

## ຄຳຕັກເຕືອນໃຫ້ຂອບຄຸນພຣະເຈົ້າ ສຳລັບບັນດາພຣະເມດຕາຂອງພຣະອົງ

1 ໂອ ຈົ່ງໂມທະນາຂອບພຣະຄຸນ ພຣະຜູ້ເປັນເຈົ້າ ເພາະພຣະອົງປະເສີດ
ເພາະຄວາມເມດຕາຂອງພຣະອົງດຳລົງເປັນນິດ
2 ໂອ ຈົ່ງໂມທະນາຂອບຄຸນ ພຣະເຈົ້າ ຜູ້ເໜືອພະທັງຫລາຍ
ເພາະຄວາມເມດຕາຂອງພຣະອົງດຳລົງເປັນນິດ
3 ໂອ ຈົ່ງໂມທະນາຂອບພຣະຄຸນຖວາຍແດ່ພຣະອົງ ຜູ້ເປັນເຈົ້າເໜືອເຈົ້າທັງຫລາຍ
ເພາະຄວາມເມດຕາຂອງພຣະອົງດຳລົງເປັນນິດ
4 ຖວາຍແດ່ພຣະອົງ ຜູ້ກະທຳການອັດສະຈັນຍິ່ງໃຫຍ່ແຕ່ອົງດຽວ
ເພາະຄວາມເມດຕາຂອງພຣະອົງດຳລົງເປັນນິດ
5 ຖວາຍແກ່ພຣະອົງ ຜູ້ສ້າງຟ້າສະຫວັນດ້ວຍພຣະສະຕິປັນຍາ
ເພາະຄວາມເມດຕາຂອງພຣະອົງດຳລົງເປັນນິດ
6 ຖວາຍແກ່ພຣະອົງ ຜູ້ກາງແຜ່ນດິນໂລກອອກເໜືອນ້ຳທັງຫລາຍ
ເພາະຄວາມເມດຕາຂອງພຣະອົງດຳລົງເປັນນິດ
7 ຖວາຍແກ່ພຣະອົງ ຜູ້ສ້າງດວງສະຫວ່າງໃຫຍ່ໆ
ເພາະຄວາມເມດຕາຂອງພຣະອົງດຳລົງເປັນນິດ
8 ສ້າງດວງຕາເວັນໃຫ້ຄອບຄອງກາງເວັນ
ເພາະຄວາມເມດຕາຂອງພຣະອົງດຳລົງເປັນນິດ

9 ດວງເດືອນ ແລະດາວທັງຫລາຍໃຫ້ຄອບຄອງກາງຄືນ
ເພາະຄວາມເມດຕາຂອງພຣະອົງດຳລົງເປັນນິດ
10 ຖວາຍແດ່ພຣະອົງ ຜູ້ຕີເອຢິບທາງບັນດາລູກຫົວປີ
ເພາະຄວາມເມດຕາຂອງພຣະອົງດຳລົງເປັນນິດ
11 ແລະນຳອິສຣາເອນອອກມາຈາກທ່າມກາງພວກເຂົາ
ເພາະຄວາມເມດຕາຂອງພຣະອົງດຳລົງເປັນນິດ
12 ດ້ວຍພຣະຫັດເຂັ້ມແຂງ ແລະພຣະກອນທີ່ຢຽດອອກ
ເພາະຄວາມເມດຕາຂອງພຣະອົງດຳລົງເປັນນິດ
13 ຖວາຍແດ່ພຣະອົງ ຜູ້ແບ່ງທະເລແດງອອກຈາກກັນ
ເພາະຄວາມເມດຕາຂອງພຣະອົງດຳລົງເປັນນິດ
14 ແລະໃຫ້ອິສຣາເອນຜ່ານໄປທ່າມກາງທະເລນັ້ນ
ເພາະຄວາມເມດຕາຂອງພຣະອົງດຳລົງເປັນນິດ
15 ແຕ່ລົ້ມຟາຣາໂອ ແລະກອງທັບຂອງເພິ່ນໃນທະເລແດງ
ເພາະຄວາມເມດຕາຂອງພຣະອົງດຳລົງເປັນນິດ
16 ຖວາຍແດ່ພຣະອົງ ຜູ້ນຳປະຊາຊົນຂອງພຣະອົງໄປໃນຖິ່ນແຫ້ງແລ້ງກັນດານ
ເພາະຄວາມເມດຕາຂອງພຣະອົງດຳລົງເປັນນິດ
17 ຖວາຍແດ່ພຣະອົງ ຜູ້ຕີພະມະຫາກະສັດທັງຫລາຍ
ເພາະຄວາມເມດຕາຂອງພຣະອົງດຳລົງເປັນນິດ
18 ແລະສັງຫານກະສັດພະນາມອຸໂຄດ
ເພາະຄວາມເມດຕາຂອງພຣະອົງດຳລົງເປັນນິດ
19 ມີສີໂຮນກະສັດຂອງຄົນອະໂມຣິດ
ເພາະຄວາມເມດຕາຂອງພຣະອົງດຳລົງເປັນນິດ
20 ແລະ ໂອກກະສັດແຫ່ງເມືອງບາຊານ
ເພາະຄວາມເມດຕາຂອງພຣະອົງດຳລົງເປັນນິດ
21 ແລະປະທານແຜ່ນດິນຂອງພວກເຂົາໃຫ້ເປັນມໍລະດົກ
ເພາະຄວາມເມດຕາຂອງພຣະອົງດຳລົງເປັນນິດ
22 ໃຫ້ເປັນມໍລະດົກແກ່ອິສຣາເອນຜູ້ຮັບໃຊ້ຂອງພຣະອົງ
ເພາະຄວາມເມດຕາຂອງພຣະອົງດຳລົງເປັນນິດ
23 ຄືພຣະອົງນີ້ເອງ ຜູ້ລະນຶກເຖິງເຮົາໃນຖານະຕໍ່າຕ້ອຍຂອງເຮົາ
ເພາະຄວາມເມດຕາຂອງພຣະອົງດຳລົງເປັນນິດ
24 ແລະໄຖ່ເຮົາໃຫ້ພົ້ນຈາກສັດຕູຂອງເຮົາ
ເພາະຄວາມເມດຕາຂອງພຣະອົງດຳລົງເປັນນິດ
25 ພຣະອົງຜູ້ປະທານອາຫານແກ່ເນື້ອໜັງທັງປວງ

ເພາະຄວາມເມດຕາຂອງພຣະອົງດຳລົງເປັນນິດ
26 ຈົ່ງໂມທະນາຂອບພຣະຄຸນ ພຣະເຈົ້າ ແຫ່ງຟ້າສະຫວັນ
ເພາະຄວາມເມດຕາຂອງພຣະອົງດຳລົງເປັນນິດ

# ບົດທີ 137

## ຄວາມໂສກເສົ້າຂອງພວກອິສຣາເອນໃນຕ່າງແດນ

1 ເມື່ອພວກຂ້ານ້ອຍຫວນຄິດເຖິງເມືອງຊີໂອນ
ພວກຂ້ານ້ອຍກໍນັ່ງຮ້ອງໄຫ້ຢູ່ແຄມແມ່ນໍ້າທີ່ປະເທດ ບາບີໂລນ.
2 ສ່ວນພິນຂອງພວກຂ້ານ້ອຍ ກໍຫ້ອຍຢູ່ເທິງຕົ້ນໄຄ້.
3 ພວກທີ່ຊະນະໄດ້ບອກໃຫ້ພວກຂ້ານ້ອຍຮ້ອງເພງກ່ຽວກັບເມືອງຊີໂອນ
ເພື່ອເຮັດໃຫ້ພວກເຂົາມີຄວາມເບີກບານສຳລານໃຈ.

4 ພວກຂ້ານ້ອຍຈະຮ້ອງເພງຂອງ ພຣະຜູ້ເປັນເຈົ້າ
ໃນຕ່າງປະເທດໄດ້ຢ່າງໃດ?
5 ໂອເຢຣູຊາເລັມ ເອີຍ ຖ້າວ່າຂ້ອຍຫລົງລືມເຈົ້າໄປ
ຂໍຢ່າໃຫ້ຂ້ອຍດີດພິນໄດ້ອີກເລີຍ.
6 ຖ້າວ່າຂ້ອຍບໍ່ຈື່ຈຳເຈົ້າ
ແລະບໍ່ຄິດເຖິງວ່າເຈົ້າເປັນຜູ້ເຮັດໃຫ້ຂ້ອຍມີຄວາມຍິນດີທີ່ສຸດ
ຂໍຢ່າໃຫ້ຂ້ອຍຮ້ອງເພງໄດ້ອີກຈັກເທື່ອ.

7 ຂ້າແດ່ ພຣະຜູ້ເປັນເຈົ້າ ຂໍພຣະອົງຊົງຈົດຈຳສິ່ງທີ່ຊາວ ເອໂດມ ໄດ້ກະທຳ
ໃນມື້ທີ່ນະຄອນ ເຢຣູຊາເລັມ ຖືກຍຶດ
ຂໍພຣະອົງຊົງຈື່ຈຳຄາວທີ່ພວກເຂົາໄດ້ເວົ້າວ່າ,
"ຈົ່ງທຳລາຍມັນໃຫ້ມຸ່ນລົງດິນ."
8 ໂອບາບີໂລນ ເອີຍ ເຈົ້າຈະຕ້ອງຖືກທຳລາຍ
ໃຫ້ສົມກັບການທີ່ເຈົ້າໄດ້ກະທຳຕໍ່ເຮົາ
ຄວາມສຸກຈົ່ງເປັນຂອງຜູ້ທີ່ແກ້ແຄ້ນເຈົ້າ.
9 ແລະເປັນຂອງຜູ້ທີ່ເອົາລູກນ້ອຍຂອງເຈົ້າໄປຟາດໃສ່ກ້ອນຫີນ.

# ບົດທີ 138

## ດາວິດສັນລະເສີນພຣະເຈົ້າ ເພາະພຣະທຳຂອງພຣະອົງເປັນຄວາມຈິງ

*ເພງສັນລະເສີນຂອງດາວິດ*

1 ຂ້ານ້ອຍຈະສັນລະເສີນພຣະອົງດ້ວຍສິ້ນສຸດໃຈຂອງຂ້ານ້ອຍ
ຂ້ານ້ອຍຈະຮ້ອງເພງສັນລະເສີນຖວາຍພຣະອົງຕໍ່ໜ້າບັນດາພະ
2 ຂ້ານ້ອຍຂາບລົງມາຍັງພຣະວິຫານອັນບໍລິສຸດຂອງພຣະອົງ

ແລະສັນລະເສີນພຣະນາມຂອງພຣະອົງ
ເພາະຄວາມເມດຕາ ແລະຄວາມຈິງຂອງພຣະອົງ
ເພາະພຣະອົງເຊີດຊູພຣະທຳຂອງພຣະອົງເໜືອພຣະນາມທັງຫລາຍຂອງພຣະອົງ
3 ໃນມື້ທີ່ຂ້ານ້ອຍຮ້ອງທູນ ພຣະອົງໄດ້ຕອບຂ້ານ້ອຍ
ພຣະອົງເພີ່ມກຳລັງຈິດໃຈຂອງຂ້ານ້ອຍ

4 ຂ້າແດ່ພຣະຜູ້ເປັນເຈົ້າ
ບັນດາກະສັດແຫ່ງແຜ່ນດິນໂລກຈະສັນລະເສີນພຣະອົງ
ເມື່ອພວກເພິ່ນເຫລົ່ານັ້ນໄດ້ຍິນພຣະທຳແຫ່ງພຣະໂອດຂອງພຣະອົງ
5 ແລະພວກເພິ່ນເຫລົ່ານັ້ນຈະຮ້ອງເພງເຖິງພຣະເສັ້ນທາງຂອງພຣະຜູ້ເປັນເຈົ້າ
ເພາະສະຫງ່າລາສີຂອງພຣະຜູ້ເປັນເຈົ້ານັ້ນໃຫຍ່ຫລວງ
6 ເຖິງແມ່ນພຣະຜູ້ເປັນເຈົ້ານັ້ນສູງຍິ່ງ ພຣະອົງກໍເຫັນແກ່ຄົນຕໍ່າຕ້ອຍ
ແຕ່ພຣະອົງຮູ້ຄົນຈອງຫອງໄດ້ແຕ່ໄກ

## ຄວາມໝັ້ນໃຈໃນພຣະເຈົ້າ

7 ແມ່ນຂ້ານ້ອຍຍ່າງຢູ່ກາງຄວາມລຳບາກຍາກເຢັນ
ພຣະອົງຈະສະຫງວນຊີວິດຂ້ານ້ອຍໄວ້
ພຣະອົງຈະຢຽດພຣະຫັດຂອງພຣະອົງອອກ
ຕໍ່ຕ້ານຄວາມຮ້າຍຂອງສັດຕູຂອງຂ້ານ້ອຍ
ແລະພຣະຫັດຂວາຂອງພຣະອົງຈະຊ່ວຍຂ້ານ້ອຍໃຫ້ລອດພົ້ນ
8 ພຣະຜູ້ເປັນເຈົ້າຈະໃຫ້ສຳເລັດພຣະປະສົງຂອງພຣະອົງແກ່ຂ້ານ້ອຍ
ຂ້າແດ່ພຣະຜູ້ເປັນເຈົ້າຄວາມເມດຕາຂອງພຣະອົງດຳລົງເປັນນິດ
ຂໍຢ່າປະຖິ້ມພຣະຫັດຖະກິດຂອງພຣະອົງ

# ບົດທີ 139

## ພຣະເຈົ້າຊົງເຝົ້າຮັກສາທຸກເວລາ

1 ຂ້າແດ່ພຣະຜູ້ເປັນເຈົ້າພຣະອົງໄດ້ກວດເບິ່ງຂ້ານ້ອຍ
ແລະຮູ້ຈັກຂ້ານ້ອຍດີ.
2 ພຣະອົງຊົງຮູ້ຈັກທຸກຢ່າງທີ່ຂ້ານ້ອຍເຮັດ
ເຖິງວ່າຢູ່ໄກແສນໄກພຣະອົງກໍຍັງເຂົ້າໃຈຄວາມນຶກຄິດຂອງຂ້ານ້ອຍ.
3 ພຣະອົງຊົງເຫັນຂ້ານ້ອຍໃນເວລາທີ່ຂ້ານ້ອຍກຳລັງເຮັດວຽກ ຫລືພັກຜ່ອນ
ພຣະອົງຮູ້ຈັກການກະທຳທຸກຢ່າງຂອງຂ້ານ້ອຍ.
4 ແມ່ນວ່າກ່ອນຂ້ານ້ອຍຈະເວົ້າ
ພຣະອົງກໍຮູ້ລ່ວງໜ້າແລ້ວວ່າຂ້ານ້ອຍຈະເວົ້າຫຍັງ.
5 ພຣະອົງຊົງສະຖິດຢູ່ອ້ອມຂ້າງອ້ອມແອ້ມຂ້ານ້ອຍ

ພຣະອົງຊົງຄຸ້ມຄອງຂ້ານ້ອຍດ້ວຍອຳນາດຂອງພຣະອົງ.
6 ຄວາມຮູ້ຂອງພຣະອົງມີເຫລືອຫລາຍ
ຈົນຂ້ານ້ອຍບໍ່ສາມາດເຂົ້າໃຈໄດ້
ຊຶ່ງເປັນການລຶກລັບທີ່ສຸດທີ່ຂ້ານ້ອຍຈະເຂົ້າໃຈໄດ້.

7 ຂ້ານ້ອຍຈະໜີຈາກພຣະວິນຍານຂອງພຣະອົງໄປຢູ່ທາງໃດ
ຂ້ານ້ອຍຈະໜີຈາກພຣະພັກຂອງພຣະອົງໄປບ່ອນໃດ.
8 ຖ້າວ່າຂ້ານ້ອຍຂຶ້ນໄປເທິງສະຫວັນຊັ້ນຟ້າ ພຣະອົງກໍຢູ່ທີ່ນັ້ນ
ຖ້າວ່າຂ້ານ້ອຍລົງໄປພິພົບຄົນຕາຍ ພຣະອົງກໍຢູ່ທີ່ນັ້ນ.
9 ຖ້າວ່າຂ້ານ້ອຍບິນໄປຈົນສຸດທາງທິດຕາເວັນອອກ
ຫລືຢູ່ຫ່າງໄກທີ່ສຸດໃນທິດຕາເວັນຕົກ.
10 ພຣະອົງກໍຢູ່ທີ່ນັ້ນ ເພື່ອນຳໜ້າຂ້ານ້ອຍໄປ
ແລະພຣະອົງກໍຊົງສະຖິດຢູ່ທີ່ນັ້ນ ເພື່ອຊ່ອຍເຫລືອຂ້ານ້ອຍ.
11 ຂ້ານ້ອຍອາດຮ້ອງຂໍໃຫ້ຄວາມມືດມົນອັດບັງຂ້ານ້ອຍໄວ້
ຫລືໃຫ້ແສງສະຫວ່າງອ້ອມຮອບຂ້ານ້ອຍກາຍເປັນຄວາມມືດ.
12 ແຕ່ວ່າຄວາມມືດນັ້ນ ບໍ່ໄດ້ມືດສຳລັບພຣະອົງ
ແລະກາງຄືນກໍແຈ້ງເໝືອນກັບກາງເວັນ
ຄວາມມືດແລະຄວາມສະຫວ່າງກໍເປັນຢ່າງດຽວກັນສຳລັບພຣະອົງ.

13 ພຣະອົງໄດ້ຊົງສ້າງທຸກໆສ່ວນໃນຕົວຂອງຂ້ານ້ອຍ
ແລະຊົງປະກອບຂ້ານ້ອຍເປັນຮ່າງຄົນເວລາຍັງຢູ່ໃນທ້ອງແມ່.
14 ຂ້ານ້ອຍສັນລະເສີນພຣະອົງ ເພາະພຣະອົງຊົງເປັນທີ່ເຄົາລົບຢຳເກງ
ທຸກໆສິ່ງທີ່ພຣະອົງຊົງກະທຳນັ້ນກໍແປກປະຫລາດ ແລະອັດສະຈັນໃຈ
ພຣະອົງຊົງເຂົ້າໃຈໃນຕົວຂ້ານ້ອຍດີ.
15 ເວລາຂ້ານ້ອຍຢູ່ໃນທ້ອງແມ່ ແລະຈະເລີນເຕີບໂຕຂຶ້ນຢ່າງເລິກລັບ
ພຣະອົງຊົງເຫັນກະດູກຂອງຂ້ານ້ອຍປະກອບເຂົ້າກັນ.
16 ກ່ອນທີ່ຂ້ານ້ອຍໄດ້ເກີດມາ ພຣະອົງຊົງເຫັນຂ້ານ້ອຍແລ້ວ
ມື້ທັງຫລາຍທີ່ຂ້ານ້ອຍມີຊີວິດຢູ່
ພຣະອົງຊົງບັນທຶກໄວ້ໝົດແລ້ວກ່ອນທີ່ມື້ເຫລົ່ານີ້ໄດ້ບັງເກີດຂຶ້ນມາ.

17 ພຣະເຈົ້າຂ້າ ຂ້ານ້ອຍເຂົ້າໃຈຍາກໃນຄວາມຄິດຂອງພຣະອົງ
ແລະຄວາມຄິດນີ້ມີຫລາຍຢ່າງທີ່ສຸດ.
18 ຖ້າວ່າຂ້ານ້ອຍສາມາດນັບຄວາມຄິດນີ້ໄດ້
ມັນຈະຕ້ອງມີຫລາຍກວ່າເມັດດິນຊາຍ
ເມື່ອຂ້ານ້ອຍຕື່ນຂຶ້ນ ຂ້ານ້ອຍກໍຍັງຢູ່ນຳພຣະອົງ.

19 ພຣະອົງເຈົ້າຂ້າ ຂ້ານ້ອຍຢາກໃຫ້ພຣະອົງຂ້າຄົນຊົ່ວຮ້າຍນັ້ນເສຍ
ຂ້ານ້ອຍຢາກໃຫ້ຄົນຊົ່ວຮ້າຍນັ້ນໜີຈາກຂ້ານ້ອຍ.
20 ພວກເຂົາເວົ້າສິ່ງຊົ່ວຮ້າຍໃສ່ພຣະອົງ
ຄືໄດ້ເວົ້າຄຳຊົ່ວຊ້າຕໍ່ສູ້ພຣະນາມຂອງພຣະອົງ.
21 ຂ້າແດ່ພຣະຜູ້ເປັນເຈົ້າ ຂ້ານ້ອຍກຽດຊັງຜູ້ທີ່ຊັງພຣະອົງຫລາຍທີ່ສຸດ
ແລະສົມນໍ້າໜ້າຜູ້ທີ່ກະບົດຄົດລ້ຽວຕໍ່ພຣະອົງ.
22 ພຣະເຈົ້າຂ້າ ຂໍພຣະອົງຊົງກວດເບິ່ງຂ້ານ້ອຍ
ແລະຮູ້ເຖິງຈິດໃຈຂອງຂ້ານ້ອຍ

23 ຂໍພຣະອົງຊົງທົດສອບເບິ່ງຂ້ານ້ອຍ
ແລະເປີດເຜີຍຄວາມນຶກຄິດທັງຫລາຍຂອງຂ້ານ້ອຍ.
24 ຂໍພຣະອົງຊົງທອດພຣະເນດເບິ່ງວ່າ
ຂ້ານ້ອຍມີຫຍັງແດ່ທີ່ເຮັດໃຫ້ພຣະອົງຊົງລຳບາກພຣະໄທ
ແລະຂໍຊົງນຳໜ້າຂ້ານ້ອຍໄປສູ່ເສັ້ນທາງອັນຄົງຢູ່ຕະຫລອດໄປ.

# ບົດທີ 140

## ດາວິດທູນຂໍພຣະເຈົ້າຊ່ວຍເພິ່ນໃຫ້ພົ້ນ

*ເຖິງຫົວໜ້ານັກຮ້ອງ ເພງສັນລະເສີນຂອງດາວິດ*

1 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊ່ວຍຂ້ານ້ອຍໃຫ້ພົ້ນຈາກຄົນຊົ່ວຮ້າຍ
ຂໍສະຫງວນຂ້ານ້ອຍໄວ້ຈາກຄົນໂຫດຮ້າຍ
2 ຜູ້ຄິດປອງຮ້າຍຢູ່ໃນຈິດໃຈຂອງພວກເຂົາ
ແລະກໍ່ກວນຕໍ່ເນື່ອງກັນໃຫ້ມີສົງຄາມຂຶ້ນ
3 ພວກເຂົາເຮັດລີ້ນຂອງຕົນໃຫ້ຄົມເໝືອນກັບລີ້ນງູ
ແລະພາຍໃຕ້ຮີມປາກຂອງພວກເຂົາມີພິດຂອງງູເຫົ່າ

*ເຊລາ*

4 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຮັກສາຂ້ານ້ອຍໄວ້ໃຫ້ພົ້ນຈາກມືຂອງຄົນຊົ່ວ
ຂໍສະຫງວນຂ້ານ້ອຍໄວ້ຈາກຄົນຮຸນແຮງ
ຜູ້ຄິດແຜນການພິກຕົນຂອງຂ້ານ້ອຍ
5 ຄົນຈອງຫອງໄດ້ເຊື່ອງກັບດັກຂ້ານ້ອຍ ແລະວາງບ້ວງແຮ້ວໄວ້
ຢູ່ຂ້າງທາງ ພວກເຂົາກາງຕາຂ່າຍ ພວກເຂົາຕັ້ງບ້ວງແຮ້ວດັກຈັບຂ້ານ້ອຍ

*ເຊລາ*

6 ຂ້ານ້ອຍທູນພຣະຜູ້ເປັນເຈົ້າວ່າ “ພຣະອົງເປັນພຣະເຈົ້າຂອງຂ້ານ້ອຍ
ຂ້າແດ່ພຣະຜູ້ເປັນເຈົ້າຂໍຟັງສຽງທູນອ້ອນວອນຂອງຂ້ານ້ອຍ
7 ຂ້າແດ່ພຣະເຈົ້າຄືອົງພຣະຜູ້ເປັນເຈົ້າ

ຜູ້ເປັນກຳລັງແຫ່ງຄວາມພົ້ນຂອງຂ້ານ້ອຍ
ພຣະອົງຄຸ້ມຫົວຂ້ານ້ອຍໄວ້ໃນຍາມເສິກ
8 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຢ່າຊົງປ່ອຍໄປຕາມຄວາມປາດຖະໜາຂອງຄົນຊົ່ວ
ຢ່າໃຫ້ການຄິດປອງຮ້າຍຂອງພວກເຂົາຄືບໜ້າໄປ
ຢ້ານວ່າພວກເຂົາຈະຍົກຕົວຂຶ້ນ

*ເຊລາ*

9 ຝ່າຍຫົວຂອງຄົນທີ່ອ້ອມຂ້ານ້ອຍໄວ້ນັ້ນ
ຂໍໃຫ້ຄຳເວົ້າແຫ່ງຮີມປາກຂອງພວກເຂົາຖ້ວມພວກເຂົາເອງ
10 ຂໍໃຫ້ຖ່ານທີ່ລຸກຢູ່ຕົກໃສ່ພວກເຂົາ ຂໍໃຫ້ພວກເຂົາຖືກຖິ້ມໃນໄຟລົງໄປໃນບໍ່
ບໍ່ໃຫ້ລຸກຂຶ້ນມາອີກ
11 ຂໍຢ່າໃຫ້ພວກເຂົາຕັ້ງຄົນສໍ່ສຽດໄວ້ໃນແຜ່ນດິນ
ຂໍໃຫ້ຄວາມຮ້າຍລ້າຄົນຮຸນແຮງຈົນລົ້ມພວກເຂົາໄດ້"

12 ຂ້ານ້ອຍຮູ້ວ່າ ພຣະຜູ້ເປັນເຈົ້າ ຈະຊົງກະທຳຄວາມທ່ຽງທຳໃຫ້ແກ່ຜູ້ທີ່ທຸກຍາກ
ແລະຈັດຄວາມຍຸດຕິທຳໃຫ້ແກ່ຄົນຂັດສົນ
13 ແນ່ນອນທີ່ສຸດ
ທີ່ຄົນຊອບທຳຈະຖວາຍໂມທະນາຂອບພຣະຄຸນພຣະນາມຂອງພຣະອົງ
ຄົນທ່ຽງທຳຈະອາໄສຢູ່ຕໍ່ເບື້ອງພຣະພັກພຣະອົງ

# ບົດທີ 141

## ດາວິດທູນຂໍໃຫ້ເລື່ອງຂອງເພິ່ນເປັນທີ່ພໍພຣະໄທຂອງພຣະເຈົ້າ

*ເພງສັນລະເສີນຂອງດາວິດ*

1 ຂ້າແດ່ພຣະຜູ້ເປັນເຈົ້າ ຂ້ານ້ອຍຮ້ອງທູນຕໍ່ພຣະອົງ ຂໍຮີບຕອບຂ້ານ້ອຍ
ຂໍຫງ່ຽງພຣະກັນຮັບຟັງສຽງຂ້ານ້ອຍ ເມື່ອຂ້ານ້ອຍຮ້ອງທູນພຣະອົງ
2 ຂໍໃຫ້ຄຳອະທິຖານຂອງຂ້ານ້ອຍເປັນດັ່ງເຄື່ອງຫອມຕໍ່ພຣະພັກພຣະອົງ
ແລະທີ່ຂ້ານ້ອຍຍົກມືຂຶ້ນເປັນດັ່ງເຄື່ອງສັດບູຊາຕອນຄໍ່າ

3 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຕັ້ງຍາມເຝົ້າປາກຂອງຂ້ານ້ອຍ
ຂໍຮັກສາປະຕູຮີມປາກຂອງຂ້ານ້ອຍ
4 ຂໍຢ່າໃຫ້ຈິດໃຈຂ້ານ້ອຍອຽງໄປຫາຄວາມຊົ່ວໃດໆ
ຫລືໃຫ້ຂ້ານ້ອຍວຸ່ນຢູ່ກັບການຊົ່ວຮ້າຍ
ຮ່ວມກັບຄົນທີ່ເຮັດຄວາມຊົ່ວຊ້າ
ແລະຂໍຢ່າໃຫ້ຂ້ານ້ອຍກິນອາຫານແຊບຂອງພວກເຂົາ
5 ຂໍໃຫ້ຄົນຊອບທຳຕີຂ້ານ້ອຍ ຈະເປັນຄວາມເມດຕາແກ່ຂ້ານ້ອຍ
ຂໍໃຫ້ລາວຕິຕຽນຂ້ານ້ອຍ

ຈະເປັນນ້ຳມັນດີເລີດ ຊຶ່ງຈະບໍ່ໃຫ້ຫົວຂ້ານ້ອຍແຕກ
ເພາະຂ້ານ້ອຍຍັງອະທິຖານຕໍ່ສູ້ຄວາມຊົ່ວຂອງພວກເຂົາທັງຫລາຍຢູ່
6 ເມື່ອຜູ້ພິພາກສາທັງຫລາຍຂອງພວກເຂົາຖືກໂຍນລົງທີ່ໜ້າຜາ
ພວກເຂົາຈະໄດ້ຍິນຖ້ອຍຄຳຂອງຂ້ານ້ອຍ ເພາະເປັນຖ້ອຍຄຳມ່ວນ

7 ກະດູກຂອງເຮົາທັງຫລາຍກະຈາຍຢູ່ທີ່ປາກຄວາມຕາຍສັນໃດ
ກໍເໝືອນກັບຄົນທີ່ຕັດໄມ້ ແລະແຕກຢູ່ເທິງແຜ່ນດິນສັນນັ້ນ

8 ຂ້າແດ່ພຣະເຈົ້າຄືອົງພຣະຜູ້ເປັນເຈົ້າຕາຂອງຂ້ານ້ອຍເລັງໄປທີ່ພຣະອົງ
ຂ້ານ້ອຍວາງໃຈໃນພຣະອົງ ຂໍຢ່າໃຫ້ຈິດໃຈຂ້ານ້ອຍຂາດຄຸນນະທຳ
9 ຂໍພຣະອົງຮັກສາຂ້ານ້ອຍໃຫ້ພົ້ນຈາກບ້ວງແຮ້ວ ຊຶ່ງພວກເຂົາວາງດັກຈັບຂ້ານ້ອຍໄວ້
ແລະຈາກບ້ວງແຮ້ວຂອງຜູ້ກະທຳຄວາມຊົ່ວຊ້າ
10 ຂໍໃຫ້ຄົນຊົ່ວຕົກໄປນຳກັນໃນຕາຂ່າຍຂອງຕົນເອງ
ແຕ່ຂໍໃຫ້ຂ້ານ້ອຍຜ່ານພົ້ນໄປ

# ບົດທີ 142

## ດາວິດໄດ້ຮັບການປະເລົ້າປະໂລມເມື່ອເພິ່ນອະທິຖານ

*ມັດຄົນບົດໜຶ່ງຂອງດາວິດ ຄຳອະທິຖານຕອນທີ່ເພິ່ນຢູ່ໃນຖໍ້າ*

1 ຂ້ານ້ອຍຮ້ອງທູນພຣະຜູ້ເປັນເຈົ້າດ້ວຍສຽງຂອງຂ້ານ້ອຍ
ດ້ວຍສຽງຂອງຂ້ານ້ອຍ ຂ້ານ້ອຍອ້ອນວອນຕໍ່ພຣະຜູ້ເປັນເຈົ້າ
2 ຂ້ານ້ອຍຫລັ່ງຄຳຮ້ອງຂອງຂ້ານ້ອຍອອກມາຕໍ່ເບື້ອງພຣະພັກພຣະອົງ
ຂ້ານ້ອຍທູນເລື່ອງຄວາມທຸກຍາກລຳບາກຂອງຂ້ານ້ອຍຕໍ່ພຣະອົງ
3 ເມື່ອຈິດໃຈຂອງຂ້ານ້ອຍເບື່ອໜ່າຍພາຍໃນ ພຣະອົງຮູ້ທາງຂອງຂ້ານ້ອຍ
ໃນການດຳເນີນຊີວິດທີ່ຂ້ານ້ອຍຍ່າງໄປ ພວກເຂົາເຊື່ອງບ້ວງແຮ້ວໄວ້ດັກຈັບຂ້ານ້ອຍ
4 ຂ້ານ້ອຍແນມເບິ່ງທາງຂວາມື ແຕ່ບໍ່ມີໃຜຍອມຮູ້ຈັກຂ້ານ້ອຍ
ຂ້ານ້ອຍບໍ່ມີບ່ອນຫລົບໄພ ບໍ່ມີໃຜເອົາໃຈໃສ່ຈິດໃຈຂ້ານ້ອຍ

5 ຂ້າແດ່ພຣະຜູ້ເປັນເຈົ້າຂ້ານ້ອຍຮ້ອງທູນຕໍ່ພຣະອົງ ຂ້ານ້ອຍວ່າ
"ພຣະອົງເປັນບ່ອນລີ້ໄພຂອງຂ້ານ້ອຍ
ເປັນສ່ວນຂອງຂ້ານ້ອຍໃນແຜ່ນດິນຂອງຄົນເປັນ
6 ຂໍຟັງຄຳຮ້ອງທູນຂອງຂ້ານ້ອຍ ເພາະຂ້ານ້ອຍຕົກຕໍ່າຫລາຍ
ຂໍຊ່ວຍຂ້ານ້ອຍໃຫ້ພົ້ນຈາກຜູ້ຂົ່ມເຫັງຂ້ານ້ອຍ
ເພາະພວກເຂົາແຂງແຮງເກີນກຳລັງຂ້ານ້ອຍ
7 ຂໍພາຈິດໃຈຂ້ານ້ອຍອອກຈາກຄຸກ
ເພື່ອຂ້ານ້ອຍຈະສັນລະເສີນພຣະນາມຂອງພຣະອົງ

ຄົນຊອບທຳຈະອ້ອມຂ້ານ້ອຍໄວ້ ເພາະພຣະອົງຈະກະທຳ
ແກ່ຂ້ານ້ອຍຢ່າງບໍລິບູນ"

# ບົດທີ 143

## ການທູນຂໍຄວາມຍິນດີເມື່ອຕ້ອງຖືກຕັດສິນ

*ເພງສັນລະເສີນຂອງດາວິດ*

1 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຮັບຟັງຄຳອະທິຖານຂອງຂ້ານ້ອຍ
ຂໍຫງ່ຽງພຣະກັນຮັບຟັງຄຳອ້ອນວອນຂອງຂ້ານ້ອຍ
ຂໍຕອບຂ້ານ້ອຍຕາມຄວາມສັດຊື່ຂອງພຣະອົງ
ຕາມຄວາມຊອບທຳຂອງພຣະອົງ
2 ຂໍຢ່າຕັດສິນຜູ້ຮັບໃຊ້ຂອງພຣະອົງ
ເພາະບໍ່ມີຄົນເປັນຄົນໃດທີ່ຊອບທຳໃນສາຍພຣະເນດຂອງພຣະອົງ

3 ເພາະສັດຕູຂົ່ມເຫັງຈິດໃຈຂ້ານ້ອຍ ມັນຢຽບຊີວິດຂ້ານ້ອຍລົງເຖິງດິນ
ມັນໄດ້ເຮັດໃຫ້ຂ້ານ້ອຍອາໄສໃນທີ່ມືດ ເໝືອນກັບຄົນທີ່ຕາຍດົນແລ້ວ
4 ເພາະສະນັ້ນ ຈິດວິນຍານຂອງຂ້ານ້ອຍເປື່ອຫ່າຍຢູ່ໃນຂ້ານ້ອຍ
ຈິດໃຈພາຍໃນຂ້ານ້ອຍກໍຢ້ານຕົກໃຈ

5 ຂ້ານ້ອຍລະນຶກເຖິງສະໄໝເກົ່າກ່ອນໄດ້
ຂ້ານ້ອຍຄຳນຶງເຖິງທຸກສິ່ງທີ່ພຣະອົງກະທຳ
ຂ້ານ້ອຍຄຳນຶງເຖິງພຣະຫັດຖະກິດຂອງພຣະອົງ
6 ຂ້ານ້ອຍຢຽດມືອອກໄປສູ່ພຣະອົງ
ຈິດໃຈຂອງຂ້ານ້ອຍກະຫາຍຫາພຣະອົງຄືກັບແຜ່ນດິນທີ່ແຫ້ງແຕກ

*ເຊລາ*

7 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຮີບຟັງຂ້ານ້ອຍ ຈິດວິນຍານຂ້ານ້ອຍຜໍ່ໄປແລ້ວ
ຂໍຢ່າເຊື່ອງພຣະພັກຂອງພຣະອົງໄວ້ຈາກຂ້ານ້ອຍ
ຢ້ານວ່າຂ້ານ້ອຍຈະເປັນເໝືອນຄົນເຫລົ່ານັ້ນທີ່ລົງໄປຍັງປາກແດນຄົນຕາຍ
8 ຂໍໂຜດໃຫ້ຂ້ານ້ອຍໄດ້ຍິນເຖິງຄວາມເມດຕາຂອງພຣະອົງໃນຕອນເຊົ້າ
ເພາະຂ້ານ້ອຍວາງໃຈໃນພຣະອົງ
ຂໍສອນຂ້ານ້ອຍເຖິງທາງທີ່ຄວນໄປ
ເພາະຂ້ານ້ອຍຕັ້ງໃຈແນ່ນອນໃນພຣະອົງ
9 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊ່ວຍຂ້ານ້ອຍໃຫ້ພົ້ນຈາກສັດຕູຂອງຂ້ານ້ອຍ
ຂ້ານ້ອຍໄດ້ເຊື່ອງຕົວຢູ່ກັບພຣະອົງ
10 ຂໍສອນໃຫ້ຂ້ານ້ອຍເຮັດຕາມນ້ຳພຣະໄທຂອງພຣະອົງ
ເພາະພຣະອົງເປັນພຣະເຈົ້າຂອງຂ້ານ້ອຍພຣະວິນຍານຂອງພຣະອົງປະເສີດ

ຂໍນຳຂ້ານ້ອຍເຂົ້າໄປຍັງແຜ່ນດິນແຫ່ງຄວາມທ່ຽງທຳ

11 ຂ້າແດ່ພຣະຜູ້ເປັນເຈົ້າຂໍສະຫງວນຊີວິດຂ້ານ້ອຍໄວ້
ເພາະເຫັນແກ່ພຣະນາມຂອງພຣະອົງ
ຂໍນຳຈິດໃຈຂ້ານ້ອຍອອກມາຈາກຄວາມຍາກລຳບາກ
ເພາະເຫັນແກ່ຄວາມຊອບທຳຂອງພຣະອົງ
12 ແລະຂໍຕັດສັດຕູຂອງຂ້ານ້ອຍອອກໄປຕາມຄວາມເມດຕາຂອງພຣະອົງ
ແລະຂໍທຳລາຍບັນດາຜູ້ທີ່ຂົ່ມໃຈຂ້ານ້ອຍ
ເພາະຂ້ານ້ອຍເປັນຜູ້ຮັບໃຊ້ຂອງພຣະອົງ

# ບົດທີ 144

## ດາວິດທູນຂໍຄວາມເມດຕາ ແລະສັນຍາວ່າຈະສັນລະເສີນພຣະເຈົ້າ

*ເພງສັນລະເສີນຂອງດາວິດ*

1 ສາທຸການແດ່ພຣະຜູ້ເປັນເຈົ້າກຳລັງຂອງຂ້ານ້ອຍ
ຜູ້ຊົງຝຶກມືຂອງຂ້ານ້ອຍໃຫ້ເຮັດສົງຄາມ
ແລະນິ້ວມືຂອງຂ້ານ້ອຍໃຫ້ເຮັດເສິກ
2 ເປັນຄວາມດີ ແລະປ້ອມປ້ອງກັນຂອງຂ້ານ້ອຍ ເປັນທີ່ກຳບັງອັນເຂັ້ມແຂງ
ແລະເປັນຜູ້ຊ່ວຍໃຫ້ພົ້ນຂອງຂ້ານ້ອຍ ເປັນໂລ່ຂອງຂ້ານ້ອຍ
ແລະເປັນຜູ້ຊຶ່ງຂ້ານ້ອຍວາງໃຈຢູ່
ຜູ້ປາບຊົນຊາດທັງຫລາຍໄວ້ໃຕ້ຂ້ານ້ອຍ

3 ຂ້າແດ່ພຣະຜູ້ເປັນເຈົ້າມະນຸດແມ່ນຜູ້ໃດທີ່ພຣະອົງຕ້ອງເອົາພຣະໄທໃສ່ລາວ
ຫລືບຸດຂອງມະນຸດແມ່ນຜູ້ໃດທີ່ພຣະອົງຕ້ອງຄິດເຖິງລາວ
4 ມະນຸດເປັນເໝືອນກັບສິ່ງທີ່ບໍ່ມີປະໂຫຍດ ວັນເວລາຂອງລາວເປັນເໝືອນເງົາທີ່ຜ່ານໄປ
5 ຂ້າແດ່ພຣະຜູ້ເປັນເຈົ້າຂໍຫງ່ຽງຟ້າສະຫວັນຂອງພຣະອົງ
ແລະຂໍສະເດັດລົງມາແຕະຕ້ອງພູເຂົາ ເພື່ອໃຫ້ມັນມີຄວັນຂຶ້ນ
6 ຂໍຊົງໃຫ້ຟ້າຜ່າອອກມາ ແລະກະຈາຍພວກເຂົາໄປ
ຂໍຍິງລູກທະນູຂອງພຣະອົງ ແລະທຳລາຍພວກເຂົາ
7 ຂໍຢຽດພຣະຫັດຂອງພຣະອົງຈາກທີ່ສູງ ຂໍຊ່ວຍເຫລືອຂ້ານ້ອຍ
ແລະຊ່ວຍຂ້ານ້ອຍໃຫ້ພົ້ນຈາກນ້ຳລົ້ນຫລາຍ
ໃຫ້ພົ້ນຈາກມືຂອງຊົນຕ່າງດ້າວ
8 ຜູ້ຊຶ່ງປາກຂອງພວກເຂົາເວົ້າເລື່ອງບໍ່ມີປະໂຫຍດ
ແລະຊຶ່ງມືຂວາຂອງພວກເຂົາເປັນມືຂວາແຫ່ງຄວາມຂີ້ຕົວະ

9 ຂ້າແດ່ພຣະເຈົ້າຂ້ານ້ອຍຈະຮ້ອງເພງບົດໃໝ່ຖວາຍແດ່ພຣະອົງ

ຂ້ານ້ອຍຈະຮ້ອງເພງສັນລະເສີນພຣະອົງດ້ວຍພິນໃຫຍ່ ແລະພິນສິບສາຍ
10 ພຣະອົງເປັນຜູ້ປະທານຄວາມພົ້ນແກ່ບັນດາກະສັດ
ຜູ້ຊົງຊ່ວຍດາວິດຜູ້ຮັບໃຊ້ຂອງພຣະອົງໃຫ້ພົ້ນຈາກດາບທີ່ນຳມາຊຶ່ງຄວາມເຈັບປວດ
11 ຂໍຊ່ວຍເຫລືອຂ້ານ້ອຍ ແລະຂໍຊ່ວຍຂ້ານ້ອຍໃຫ້ພົ້ນຈາກມືຄົນຕ່າງດ້າວ
ຜູ້ຊຶ່ງປາກຂອງພວກເຂົາເວົ້າເລື່ອງບໍ່ມີປະໂຫຍດ
ແລະຊຶ່ງມືຂວາຂອງພວກເຂົາເປັນມືຂວາແຫ່ງຄວາມຂີ້ຕົວະ

12 ເພື່ອບັນດາລູກຊາຍຂອງຂ້ານ້ອຍທັງຫລາຍ ເມື່ອພວກເຂົາຍັງໜຸ່ມໆຢູ່
ຈະເປັນເໝືອນຕົ້ນໄມ້ໃຫຍ່ເຕັມຂະໜາດ
ເພື່ອບັນດາບຸດສາວຂອງຂ້ານ້ອຍທັງຫລາຍຈະເປັນເໝືອນເສົາຫົວມຸມ
ສະຫລັກອອກມາຕາມແບບພະລາຊະວັງ
13 ເພື່ອເລົ້າເຂົ້າຂອງຂ້ານ້ອຍທັງຫລາຍຈະເຕັມ ມີຂອງບັນຈຸຢູ່ທຸກຢ່າງ
ເພື່ອແກະຂອງຂ້ານ້ອຍທັງຫລາຍ
ມີລູກເປັນພັນເປັນໝື່ນຕາມຖະໜົນຂອງຂ້ານ້ອຍທັງຫລາຍ
14 ເພື່ອງົວໂຕຜູ້ຂອງຂ້ານ້ອຍທັງຫລາຍມີກຳລັງໃຊ້ແຮງງານ
ເພື່ອບໍ່ມີໃຜພັງເຂົ້າມາ ບໍ່ມີອອກໄປ
ເພື່ອບໍ່ມີສຽງຮ້ອງທຸກໃນຖະໜົນຫົນທາງຂອງຂ້ານ້ອຍທັງຫລາຍ

15 ຊົນຊາດຜູ້ມີພຣະພອນນີ້ຫລັ່ງລົງມາເຖິງກໍເປັນສຸກ
ຊົນຊາດ ຊຶ່ງພຣະເຈົ້າຂອງພວກເຂົາຄືພຣະຜູ້ເປັນເຈົ້າກໍເປັນສຸກ

# ບົດທີ 145

## ບົດເພງສັນລະເສີນ

1 ຂ້ານ້ອຍຈະປະກາດຄວາມຍິ່ງໃຫຍ່ຂອງພຣະອົງ
ຜູ້ຊົງເປັນເຈົ້າມະຫາຊີວິດຂອງຂ້ານ້ອຍ
ຂ້ານ້ອຍຈະສັນລະເສີນພຣະອົງຕະຫລອດໄປ.
2 ຂ້ານ້ອຍຈະຂອບພຣະຄຸນພຣະອົງທຸກໆມື້
ແລະຈະສັນລະເສີນພຣະອົງຕະຫລອດໄປ.

3 ພຣະຜູ້ເປັນເຈົ້າຊົງຍິ່ງໃຫຍ່ ແລະສົມຄວນໄດ້ຮັບຄຳສັນລະເສີນອັນສູງສົ່ງ
ຄວາມຍິ່ງໃຫຍ່ຂອງພຣະອົງຊົງໃຫຍ່ກວ່າຄວາມເຂົ້າໃຈຂອງຂ້ານ້ອຍ.
4 ສິ່ງທີ່ພຣະອົງຊົງກະທຳນັ້ນ
ຈະຕ້ອງໄດ້ຮັບຄຳສັນລະເສີນຈາກຄົນຊົ່ວອາຍຸນີ້ ແລະຊົ່ວອາຍຸໜ້າ
ພວກເຂົາຈະປະກາດເຖິງກິດຈະການອັນຍິ່ງໃຫຍ່ຂອງພຣະອົງ.
5 ມະນຸດຈະກ່າວເຖິງລັດສະໝີ ແລະອຳນາດອັນຊົງສະຫງ່າລາສີຂອງພຣະອົງ

ສ່ວນຂ້ານ້ອຍກໍຈະຄິດເຖິງການກະທຳອັນອັດສະຈັນຂອງພຣະອົງ.
6 ມະນຸດຈະກ່າວເຖິງການກະທຳອັນໜ້າຢ້ານກົວຂອງພຣະອົງ
ສ່ວນຂ້ານ້ອຍກໍຈະປະກາດເຖິງຄວາມຍິ່ງໃຫຍ່ຂອງພຣະອົງ.
7 ພວກເຂົາຈະເວົ້າເຖິງຄວາມດີທຸກຢ່າງຂອງພຣະອົງ
ແລະຮ້ອງເພງສັນລະເສີນຄວາມເມດຕາປານີຂອງພຣະອົງ.

8 **ພຣະຜູ້ເປັນເຈົ້າ**ຊົງມີຄວາມຮັກ ແລະຄວາມເມດຕາປານີ
ພຣະອົງຊົງພຣະພິໂລດຊ້າ ແລະເຕັມໄປດ້ວຍຄວາມຮັກອັນໝັ້ນຄົງ.
9 ພຣະອົງຊົງດີຕໍ່ທຸກໆຄົນ
ແລະສົງສານຕໍ່ທຸກໆສິ່ງທີ່ພຣະອົງຊົງສ້າງມາ.
10 ຂ້າແດ່**ພຣະຜູ້ເປັນເຈົ້າ** ທຸກໆສິ່ງທີ່ພຣະອົງຊົງສ້າງມານັ້ນ
ຈະສັນລະເສີນພຣະອົງ
ແລະໄພ່ພົນຂອງພຣະອົງຈະຖວາຍຄຳຂອບພຣະຄຸນແດ່ພຣະອົງ.
11 ພວກເຂົາຈະກ່າວເຖິງລັດສະໝີແຫ່ງລາຊະອານາຈັກຂອງພຣະອົງ
ແລະບອກທຸກຄົນເຖິງອຳນາດອັນຍິ່ງໃຫຍ່ຂອງພຣະອົງ.
12 ເພື່ອວ່າມະນຸດທຸກຄົນຈະຮູ້ຈັກກິດຈະການອັນຍິ່ງໃຫຍ່ຂອງພຣະອົງ
ແລະລັດສະໝີອັນສະຫງ່າລາສີແຫ່ງລາຊະອານາຈັກຂອງພຣະອົງ.
13 ລາຊະອານາຈັກຂອງພຣະອົງຊົງເປັນຢູ່ຕະຫລອດໄປ
ແລະພຣະອົງກໍຊົງເປັນ**ພຣະເຈົ້າ**ມະຫາຊີວິດສືບໆໄປ
**ພຣະເຈົ້າ**ຊົງສັດຊື່ຕໍ່ຄຳສັນຍາຂອງພຣະອົງ
ແລະກິດຈະການທຸກຢ່າງຂອງພຣະອົງຊົງດີ.

14 ພຣະອົງຊົງຊ່ອຍເຫລືອທຸກໆຄົນທີ່ຕົກທຸກໄດ້ຍາກ
ແລະຊົງຍົກຍໍທຸກໆຄົນທີ່ຖືກຫຍໍ້ຫຍັນ.
15 ທຸກໆສິ່ງທີ່ມີຊີວິດກໍມີຄວາມຫວັງຢ່າງລົ້ນເຫລືອຢູ່ໃນພຣະອົງ
ແລະພຣະອົງຊົງປະທານອາຫານໃຫ້ຕາມທີ່ພວກເຂົາຕ້ອງການ.
16 ພຣະອົງຊົງປະທານໃຫ້ພວກເຂົາຢ່າງພຽງພໍ
ແລະຊົງໃຫ້ພວກເຂົາເພິ່ງພໍໃຈໃນຄວາມປະສົງທຸກຢ່າງ.

17 ທຸກສິ່ງທີ່**ພຣະເຈົ້າ**ຊົງກະທຳ ກໍຊອບທຳທັງໝົດ
ຊົງເມດຕາໃນການກະທຳທຸກຢ່າງ.
18 ພຣະອົງຊົງຢູ່ໃກ້ໆ ທຸກໆ ຄົນທີ່ຮ້ອງຫາພຣະອົງ
ທັງຜູ້ທີ່ຮ້ອງຫາພຣະອົງດ້ວຍຈິງໃຈ.
19 ພຣະອົງຊົງຕອບສະໜອງຄວາມຕ້ອງການຂອງທຸກຄົນທີ່ຢຳເກງພຣະອົງ
ພຣະອົງຊົງໄດ້ຍິນສຽງຮ້ອງໄຫ້ຂອງລາວ ແລະຊົງຊ່ອຍລາວໃຫ້ພົ້ນໄພ.

20 ພຣະອົງຊົງດູແລຮັກສາທຸກຄົນທີ່ຮັກພຣະອົງ
ແຕ່ວ່າພຣະອົງຈະທຳລາຍຄົນຊົ່ວທຸກຄົນຖິ້ມໝົດ.
21 ຂ້ານ້ອຍຈະສັນລະເສີນ ພຣະຜູ້ເປັນເຈົ້າ ເລື້ອຍໆ
ຂໍໃຫ້ທຸກສິ່ງທີ່ພຣະອົງຊົງສ້າງມານັ້ນ
ສັນລະເສີນພຣະນາມອັນບໍລິສຸດຂອງພຣະອົງຕະຫລອດໄປ.

# ບົດທີ 146

## ການສັນລະເສີນພຣະຜູ້ຊ່ອຍໃຫ້ພົ້ນໄພ

1 ຈົ່ງສັນລະເສີນ ພຣະຜູ້ເປັນເຈົ້າ
ຈິດວິນຍານຂອງຂ້ານ້ອຍເອີຍ ຈົ່ງສັນລະເສີນພຣະອົງ.
2 ຕະຫລອດຊີວິດຂອງຂ້ອຍ ຂ້ອຍຈະສັນລະເສີນພຣະອົງ
ແລະຈະຮ້ອງເພງຖວາຍແດ່ ພຣະເຈົ້າ ຂອງຂ້ອຍຈົນສິ້ນຊີວິດ.

3 ຂໍທ່ານຢ່າໄວ້ເນື້ອເຊື່ອໃຈນຳພວກເຈົ້ານາຍທັງຫລາຍ
ຄືມະນຸດທີ່ບໍ່ອາດຊ່ອຍທ່ານໃຫ້ພົ້ນໄພໄດ້.
4 ເວລາພວກເຂົາຕາຍ ພວກເຂົາກໍກັບຄືນເປັນຂີ້ຝຸ່ນດິນ
ໃນມື້ນັ້ນແຜນການທຸກຢ່າງກໍຈະເຖິງຈຸດຈົບ.

5 ຄວາມສຸກຈົ່ງເປັນຂອງຜູ້ທີ່ໄດ້ຮັບຄວາມຊ່ອຍເຫລືອ
ຈາກ ພຣະເຈົ້າ ຂອງຢາໂຄບ
ແລະຜູ້ທີ່ໄວ້ວາງໃຈໃນ ພຣະຜູ້ເປັນເຈົ້າ ຂອງຕົນ.
6 ຜູ້ຊົງສ້າງສະຫວັນຊັ້ນຟ້າ ໂລກ ແລະນໍ້າທະເລ
ພ້ອມທັງທຸກໆສິ່ງທີ່ຢູ່ໃນນັ້ນ
ພຣະອົງຊົງຮັກສາຄຳສັນຍາຂອງພຣະອົງໄວ້ສະເໝີ.
7 ພຣະອົງຊົງຕັດສິນເຂົ້າຂ້າງຜູ້ທີ່ຖືກຂົ່ມເຫັງ
ແລະຊົງປະທານອາຫານໃຫ້ແກ່ຜູ້ທີ່ອຶດຫິວ
ພຣະຜູ້ເປັນເຈົ້າ ຊົງຊ່ອຍນັກໂທດໃຫ້ເປັນອິດສະຫລະ.
8 ແລະໃຫ້ຄົນຕາບອດໄດ້ເຫັນຮຸ່ງ
ພຣະອົງຊົງຍົກຍໍທຸກຄົນທີ່ຖືກຫຍໍ້ຫຍັນ
ແລະຊົງຮັກຄົນຊອບທຳ.
9 ພຣະອົງຊົງຄຸ້ມຄອງຄົນຕ່າງດ້າວທີ່ອາໄສຢູ່ໃນປະເທດ
ພຣະອົງຊົງຊ່ອຍພວກແມ່ໝ້າຍ ແລະລູກກຳພ້າ
ແຕ່ຊົງທຳລາຍແຜນການຂອງຄົນຊົ່ວ.

10 ພຣະຜູ້ເປັນເຈົ້າ ຈະຊົງເປັນ ພຣະເຈົ້າ ມະຫາຊີວິດຕະຫລອດໄປ

ເມືອງຊີໂອນ ເອີຍພຣະເຈົ້າຂອງເຈົ້າຈະປົກປັກຮັກສາຕະຫລອດເວລາ
ຈົ່ງສັນລະເສີນ ພຣະຜູ້ເປັນເຈົ້າ.

# ບົດທີ 147

## ຜູ້ທຳນວາຍຕັກເຕືອນໃຫ້ສັນລະເສີນພຣະເຈົ້າ

1 ຈົ່ງສັນລະເສີນ ພຣະຜູ້ເປັນເຈົ້າ
ເປັນການດີທີ່ຈະຮ້ອງເພງສັນລະເສີນ ພຣະເຈົ້າຂອງເຮົາ
ເພາະການກະທຳເຊັ່ນນັ້ນເປັນທີ່ໜ້າຍິນດີ ແລະການສັນລະເສີນກໍເໝາະສົມ

2 ພຣະຜູ້ເປັນເຈົ້າກໍສ້າງ ເຢຣູຊາເລັມ ຂຶ້ນ
ພຣະອົງລວບລວມຄົນ ອິສຣາເອນ ທີ່ຕ້ອງກະຈັດກະຈາຍໄປ
3 ພຣະອົງຮັກສາຄົນທີ່ຊອກຊ້ຳລະກຳໃຈ ແລະຊົງພັນບາດແຜຂອງພວກເຂົາ
4 ພຣະອົງນັບຈຳນວນດາວ ພຣະອົງຕັ້ງຊື່ມັນທຸກດວງ
5 ອົງ ພຣະຜູ້ເປັນເຈົ້າຂອງເຮົາຍິ່ງໃຫຍ່ ແລະລິດທານຸພາບອຸດົມ
ຄວາມເຂົ້າໃຈຂອງພຣະອົງນັ້ນວັດແທກບໍ່ໄດ້
6 ພຣະຜູ້ເປັນເຈົ້າຊູຄົນຖ່ອມໃຈຂຶ້ນ ພຣະອົງແກວ່ງຄົນຊົ່ວລົງເຖິງດິນ

7 ຈົ່ງຮ້ອງເພງໂມທະນາພຣະຄຸນຖວາຍ ພຣະຜູ້ເປັນເຈົ້າ
ຈົ່ງຮ້ອງເພງສັນລະເສີນ ພຣະເຈົ້າຂອງເຮົາດ້ວຍພິນຄູ່
8 ຜູ້ຄຸມຟ້າສະຫວັນດ້ວຍເມກ ຜູ້ຕຽມຝົນໃຫ້ແກ່ແຜ່ນດິນໂລກ
ຜູ້ເຮັດໃຫ້ຫຍ້າງອກເທິງພູເຂົາ
9 ພຣະອົງປະທານອາຫານແກ່ສັດ ແລະແກ່ລູກກາທີ່ຮ້ອງ

10 ຄວາມປິຕິຍິນດີຂອງພຣະອົງບໍ່ໄດ້ຢູ່ທີ່ກຳລັງຂອງມ້າ
ຄວາມພໍໃຈຂອງພຣະອົງບໍ່ໄດ້ຢູ່ທີ່ຂາຂອງມະນຸດ
11 ແຕ່ພຣະຜູ້ເປັນເຈົ້າຊົງພໍພຣະໄທໃນຄົນທີ່ຢຳເກງພຣະອົງ
ໃນຄົນທີ່ຄວາມຫວັງຂອງຕົນຢູ່ໃນຄວາມເມດຕາຂອງພຣະອົງ

12 ເຢຣູຊາເລັມ ເອີຍ ຈົ່ງສັນລະເສີນ ພຣະຜູ້ເປັນເຈົ້າຊີໂອນ ເອີຍ
ຈົ່ງຖວາຍສັນລະເສີນແກ່ ພຣະເຈົ້າຂອງນາງ
13 ເພາະພຣະອົງເສີມກຳລັງປະຕູຂອງນາງ
ພຣະອົງອຳນວຍພຣະພອນບຸດທັງຫລາຍທີ່ຢູ່ພາຍໃນນາງ
14 ພຣະອົງຊົງກະທຳສັນຕິສຸກໃນເຂດແດນຂອງນາງ
ໃຫ້ນາງອີ່ມດ້ວຍເຂົ້າວິດທີ່ດີທີ່ສຸດ

15 ພຣະອົງໃຊ້ພຣະບັນຍັດຂອງພຣະອົງອອກໄປຍັງແຜ່ນດິນໂລກ

ພຣະທຳຂອງພຣະອົງໄປໄວ
16 ພຣະອົງຊົງປະທານຫິມະເໝືອນຢ່າງຂົນແກະ
ພຣະອົງຫວ່ານນ້ຳໝອກແຂງຂາວເໝືອນຢ່າງຂີ້ເທົ່າ
17 ພຣະອົງໂຍນນ້ຳແຂງຂອງພຣະອົງເປັນກ້ອນໆ
ໃຜຈະທົນທານຄວາມໜາວຂອງພຣະອົງໄດ້
18 ພຣະອົງໃຊ້ພຣະທຳຂອງພຣະອົງອອກໄປ ແລະລະລາຍມັນ
ພຣະອົງໃຫ້ລົມພັດ ແລະນ້ຳກໍໄຫລ

19 ພຣະອົງສະແດງພຣະທຳຂອງພຣະອົງແກ່ຢາໂຄບ
ກົດເກນ ແລະຄຳຕັດສິນຂອງພຣະອົງແກ່ອິສຣາເອນ
20 ພຣະອົງບໍ່ໄດ້ປະກອບການເຊັ່ນນີ້ແກ່ປະຊາຊາດອື່ນໃດ
ແລະສຳລັບຄຳຕັດສິນຂອງພຣະອົງນັ້ນ ພວກເຂົາບໍ່ຮູ້ຈັກເລີຍ
ຈົ່ງສັນລະເສີນພຣະຜູ້ເປັນເຈົ້າ

# ບົດທີ 148

## ທົ່ວທັງຈັກກະວານຈົ່ງສັນລະເສີນພຣະເຈົ້າ

1 ຈົ່ງສັນລະເສີນພຣະຜູ້ເປັນເຈົ້າ
ພວກເຈົ້າທີ່ຢູ່ເທິງສະຫວັນຊັ້ນຟ້າ
ຈົ່ງສັນລະເສີນພຣະຜູ້ເປັນເຈົ້າຈາກເບື້ອງເທິງ.
2 ຄືພວກເທວະດາທັງຫລາຍ ພ້ອມທັງຝູງກອງທັບເມືອງຟ້າສະຫວັນ
ຈົ່ງສັນລະເສີນພຣະອົງ.
3 ດວງຕາເວັນ ແລະດວງເດືອນ
ພ້ອມທັງດວງດາວທີ່ສ່ອງແສງສະຫວ່າງ ຈົ່ງສັນລະເສີນພຣະອົງ.
4 ສະຫວັນຊັ້ນຟ້າສູງສຸດ ແລະທັງນ້ຳທີ່ຢູ່ເທິງທ້ອງຟ້າ
ຈົ່ງສັນລະເສີນພຣະອົງ.
5 ຂໍໃຫ້ທຸກໆສິ່ງເຫລົ່ານີ້ສັນລະເສີນພຣະນາມຂອງພຣະຜູ້ເປັນເຈົ້າ
ເພາະພຣະອົງຊົງຮັບສັ່ງສິ່ງເຫລົ່ານີ້ຈຶ່ງເກີດຂຶ້ນມາ.
6 ຍ້ອນຄຳສັ່ງຂອງພຣະອົງ ສິ່ງເຫລົ່ານີ້ຈຶ່ງຄົງຢູ່ບ່ອນເກົ່າຕະຫລອດໄປ
ແລະພວກມັນກໍບໍ່ໄດ້ລະເມີດຄຳສັ່ງຂອງພຣະອົງ.

7-8 ສັດທະເລ ແລະມະຫາສະໝຸດເລິກທັງຫລາຍ
ຟ້າແມບ ໝາກເຫັບ ແລະເມກໝອກ
ພ້ອມທັງລົມແຮງກ້າທີ່ເຊື່ອຟັງຄຳສັ່ງຂອງພຣະອົງ
ຈົ່ງສັນລະເສີນພຣະຜູ້ເປັນເຈົ້າຈາກແຜ່ນດິນໂລກ.
9 ພູນ້ອຍ ແລະພູໃຫຍ່ທັງຫລາຍ

ພ້ອມທັງຕົ້ນໝາກໄມ້ ແລະປ່າດົງພົງໄພ ຈົ່ງສັນລະເສີນພຣະອົງ.
10 ສັດບ້ານ ແລະສັດປ່າທຸກໂຕ
ພ້ອມທັງສັດເລືອຄານແລະຝູງນົກ ຈົ່ງສັນລະເສີນພຣະອົງ.
11 ບັນດາເຈົ້າຊີວິດ ພວກເຈົ້າຊາຍ ແລະເຈົ້ານາຍ
ພ້ອມທັງປະຊາຊົນທຸກທົ່ວໜ້າ.
12 ຊາຍໜຸ່ມຍິງສາວ
ຜູ້ເຖົ້າ ພ້ອມທັງເດັກນ້ອຍ ຈົ່ງພາກັນສັນລະເສີນພຣະອົງ.
13 ຂໍໃຫ້ທັງໝົດນີ້ສັນລະເສີນພຣະນາມຂອງ ພຣະຜູ້ເປັນເຈົ້າ
ພຣະນາມຂອງພຣະອົງຊົງຍິ່ງໃຫຍ່ກວ່າສິ່ງອື່ນໃດ
ລັດສະໝີຂອງພຣະອົງຊົງສູງກວ່າແຜ່ນດິນໂລກ ແລະສະຫວັນຊັ້ນຟ້າ.
14 ພຣະອົງຊົງໃຫ້ຊົນຊາດຂອງພຣະອົງແຂງແຮງຂຶ້ນ
ເພື່ອວ່າໄພ່ພົນທຸກຄົນຈະສັນລະເສີນພຣະອົງ
ຄືຊາວອິສຣາເອນຊຶ່ງເປັນຜູ້ທີ່ຮັກຂອງພຣະອົງ
ຈົ່ງສັນລະເສີນ ພຣະຜູ້ເປັນເຈົ້າ.

# ບົດທີ 149

## ການຕັກເຕືອນໃຫ້ສັນລະເສີນພຣະເຈົ້າ ເພາະພຣະອົງຮັກຊີໂອນ

1 ຈົ່ງສັນລະເສີນ ພຣະຜູ້ເປັນເຈົ້າ ເຖີດ ຈົ່ງຮ້ອງເພງບົດໃໝ່ຖວາຍ ພຣະຜູ້ເປັນເຈົ້າ
ຮ້ອງບົດສັນລະເສີນຖວາຍພຣະອົງໃນຊຸມນຸມຊົນ
2 ໃຫ້ອິສຣາເອນຍິນດີໃນຜູ້ສ້າງຂອງພວກເຂົາ
ໃຫ້ບຸດທັງຫລາຍຂອງຊີໂອນປິຕິຍິນດີໃນກະສັດຂອງພວກເຂົາ
3 ໃຫ້ພວກເຂົາສັນລະເສີນພຣະນາມຂອງພຣະອົງດ້ວຍເຕັ້ນລຳ
ໃຫ້ພວກເຂົາຖວາຍເພງສັນລະເສີນແກ່ພຣະອົງດ້ວຍການຕີກອງ ແລະພິນຄູ່
4 ເພາະ ພຣະຜູ້ເປັນເຈົ້າ ຊົງຊື່ນບານໃຈໃນປະຊາຊົນຂອງພຣະອົງ
ພຣະອົງຈະປະດັບຄົນຖ່ອມໃຈດ້ວຍຄວາມພົ້ນ
5 ໃຫ້ຜູ້ທີ່ເຊື່ອຈົ່ງຊື່ນຊົມໃນສະຫງ່າລາສີ
ໃຫ້ພວກເຂົາຮ້ອງເພງເທິງຕຽງນອນຂອງຕົນ
6 ໃຫ້ການສັນລະເສີນຢ່າງສູງແກ່ພຣະເຈົ້າຢູ່ໃນປາກຂອງພວກເຂົາ
ແລະໃຫ້ດາບສອງຄົມຢູ່ໃນມືຂອງພວກເຂົາ
7 ເພື່ອເຮັດການແກ້ແຄ້ນບັນດາປະຊາຊາດ
ແລະເຮັດການລົງໂທດຊົນຊາດທັງຫລາຍ
8 ເພື່ອເອົາໂສ້ລ່າມບັນດາກະສັດຂອງພວກເຂົາ
ແລະເອົາເຄື່ອງເຫລັກຈຳຈອງລ່າມບັນດາຂ້າລາຊະການຂອງພວກເຂົາ

9 ເພື່ອຈະກະທຳແກ່ພວກເຂົາຕາມຄຳພິພາກສາທີ່ບັນທຶກໄວ້ແລ້ວ
ອັນເປັນກຽດແກ່ໄພ່ພົນຂອງພຣະອົງ
ຈົ່ງສັນລະເສີນ ພຣະຜູ້ເປັນເຈົ້າ ເຖີດ

# ບົດທີ 150

## ສັນລະເສີນພຣະຜູ້ເປັນເຈົ້າ

1 ຈົ່ງສັນລະເສີນ ພຣະຜູ້ເປັນເຈົ້າ
ຈົ່ງສັນລະເສີນ ພຣະເຈົ້າ ໃນພຣະວິຫານຂອງພຣະອົງ
ຈົ່ງສັນລະເສີນລິດທານຸພາບຂອງພຣະອົງໃນສະຫວັນຊັ້ນຟ້າ.
2 ຈົ່ງສັນລະເສີນພຣະອົງຍ້ອນສິ່ງອັດສະຈັນຍິ່ງໃຫຍ່ທີ່ພຣະອົງຊົງກະທຳ
ຈົ່ງສັນລະເສີນຄວາມຍິ່ງໃຫຍ່ທີ່ສຸດຂອງພຣະອົງ.

3 ຈົ່ງເປົ່າແກ ແລະດີດພິນສັນລະເສີນພຣະອົງ.
4 ຈົ່ງຕີກອງ ແລະຟ້ອນລຳສັນລະເສີນພຣະອົງ
ຈົ່ງດີດພິນ ແລະເປົ່າຂຸ່ຍສັນລະເສີນພຣະອົງ.
5 ຈົ່ງສັນລະເສີນພຣະອົງດ້ວຍສິ່ງອັນດັງ.

6 ທຸກໆສິ່ງທີ່ມີຊີວິດ ຈົ່ງສັນລະເສີນ ພຣະຜູ້ເປັນເຈົ້າ
ຈົ່ງສັນລະເສີນ ພຣະຜູ້ເປັນເຈົ້າ.

* * *

# ສຸພາສິດ

## ບົດທີ 1

### ຄົນທີ່ມີສະຕິປັນຍາຈະຢຳເກງພຣະຜູ້ເປັນເຈົ້າ

1 ສຸພາສິດຂອງໂຊໂລໂມນ ລູກຊາຍຂອງດາວິດ ກະສັດແຫ່ງອິສຣາເອນ
2 ເພື່ອໃຫ້ບັນລຸປັນຍາ ແລະຄຳສັ່ງສອນ
ເພື່ອໃຫ້ເຂົ້າໃຈຖ້ອຍຄຳແຫ່ງຄວາມເຂົ້າໃຈ
3 ເພື່ອຈະຮັບເອົາຄຳສັ່ງສອນຈາກສະຕິປັນຍາ ຈາກຄວາມຊອບທຳ,
ຈາກການຕັດສິນອັນຍຸດຕິທຳ ແລະຈາກຄວາມທ່ຽງທຳ
4 ເພື່ອສັ່ງສອນບັນດາຄົນໂງ່ໃຫ້ມີຄວາມລະມັດລະວັງ ແລະໃຫ້ຄວາມຮູ້
ແລະຄວາມສະຫລຽວສະຫລາດແກ່ຄົນໜຸ່ມ
5 ທັງນັກປາດຈະໄດ້ຍິນ ແລະເພີ່ມພູນການຮຽນຮູ້
ແລະຄົນທີ່ມີຄວາມເຂົ້າໃຈຈະໄດ້ຄຳປຶກສາທີ່ສະຫລາດ
6 ຈຶ່ງເຂົ້າໃຈສຸພາສິດ ແລະຖ້ອຍຄຳອັນເລິກລັບທັງຖ້ອຍຄຳຂອງນັກປາດ
ແລະຖ້ອຍຄຳອັນເລິກລັບຂອງພວກເຂົາ
7 ຄວາມຢຳເກງພຣະຜູ້ເປັນເຈົ້າເປັນບໍ່ເກີດຂອງຄວາມຮູ້
ຄົນໂງ່ປະໝາດປັນຍາແລະການສຶກສາ
8 ລູກຊາຍຂອງເຮົາເອີຍ ຈົ່ງຟັງຄຳສັ່ງສອນຂອງພໍ່ເຈົ້າ
ແລະຢ່າຖິ້ມຄຳສັ່ງສອນຂອງແມ່ເຈົ້າ
9 ເພາະທັງສອງນັ້ນຈະເປັນກະໂຈມງາມສວມຫົວຂອງເຈົ້າ
ເປັນສາຍສ້ອຍປະດັບຄໍຂອງເຈົ້າ
10 ລູກຊາຍຂອງເຮົາເອີຍ ຖ້າຄົນບາບລໍ້ລວງເຈົ້າ
ເຈົ້າຢ່າໄດ້ເຮັດຕາມ
11 ຖ້າພວກເຂົາວ່າ "ມາກັບພວກເຮົາ ໃຫ້ເຮົາຄອຍຖ້າເອົາເລືອດຄົນ
ໃຫ້ເຮົາດັກໂຈມຕີຄົນບໍ່ມີຄວາມຜິດຫລິ້ນ
12 ໃຫ້ພວກເຮົາກືນພວກເຂົາທັງເປັນເໝືອນກັບບ່ອນທີ່ຕາບໍ່ເຫັນ
ແລະກືນພວກເຂົາທັງຕົວເໝືອນຄົນເຫລົ່ານັ້ນທີ່ລົງໄປສູ່ປາກແດນຂອງຄວາມຕາຍ
13 ເຮົາຈະພົບຂອງປະເສີດທຸກຢ່າງ
ເຮົາຈະບັນຈຸເຮືອນຂອງເຮົາໃຫ້ເຕັມດ້ວຍຂອງທີ່ປຸ້ນມາໄດ້
14 ຈົ່ງເຂົ້າສ່ວນກັບພວກເຮົາ
ເຮົາທຸກຄົນຈະມີເງິນຖົງດຽວກັນ"
15 ລູກຊາຍຂອງເຮົາເອີຍ ຢ່າຍ່າງໄປໃນທາງນັ້ນກັບພວກເຂົາ

ຈົ່ງຫ້າມຕີນຂອງເຈົ້າຈາກທາງຂອງພວກເຂົາ
16 ເພາະວ່າຕີນຂອງພວກເຂົາແລ່ນໄປເຮັດຄວາມຊົ່ວຮ້າຍ
ແລະພວກເຂົາຮີບຟ້າວໄປເຮັດໃຫ້ຄົນເລືອດຕົກ
17 ເພາະວ່າຈະເອົາບ້ວງແຮ້ວໄປຫ້າງໄວ້ໃຫ້ນົກເຫັນທຸກໂຕ
ກໍບໍ່ມີປະໂຫຍດ
18 ແຕ່ຄົນເຫລົ່ານີ້ໄດ້ລີ້ຊ່ອນຄອຍຖ້າຕໍ່ສູ້ເລືອດຂອງຕົນເອງ
ເຂົາດັກໂຈມຕີຊີວິດຂອງເຂົາເອງ
19 ທາງຂອງບັນດາຜູ້ທີ່ຫາກຳໄລດ້ວຍຄວາມບໍ່ສັດຊື່ກໍເປັນຢ່າງນີ້ແຫລະ
ກຳໄລນັ້ນກັດກິນຊີວິດຂອງຜູ້ທີ່ໄດ້ມັນມາ
20 ປັນຍາຮ້ອງສຽງດັງຢູ່ທີ່ຖະໜົນ
ມັນເປັ່ງສຽງຮ້ອງອອກໃນກາງຕະຫຼາດ
21 ປັນຍາຮ້ອງທີ່ຊຸມນຸມຊົນໃຫຍ່ສຸດ ທີ່ທາງເຂົ້າປະຕູເມືອງ
ແລະກ່າວຖ້ອຍຄຳຂອງຕົນຢູ່ໃນເມືອງວ່າ
22 "ຄົນໂງ່ເອີຍ ເຈົ້າຈະຮັກຄວາມໂງ່ຈ້າໄປດົນປານໃດ?
ຄົນທັງຫຼາຍທີ່ມັກເຍາະເຍີ້ຍຈະປິຕິຍິນດີໃນການເຍາະເຍີ້ຍດົນປານໃດ?
ແລະຄົນໂງ່ຈະກຽດຊັງຄວາມຮູ້ດົນປານໃດ?
23 ຈົ່ງກັບມາຕາມຄຳຕັກເຕືອນຂອງເຮົາ
ເບິ່ງແມ ເຮົາຈະຖອກວິນຍານຂອງເຮົາໃຫ້ເຈົ້າ
ແລະເຮົາຈະບອກຖ້ອຍຄຳຂອງເຮົາໃຫ້ພວກເຈົ້າຮູ້
24 ເພາະເຮົາໄດ້ເອີ້ນແລ້ວ ແລະເຈົ້າໄດ້ປະຕິເສດ
ເຮົາຢຽດມືອອກແລະບໍ່ມີໃຜສົນໃຈ
25 ຍ້ອນພວກເຈົ້າບໍ່ໄດ້ຮັບຮູ້ໃນບັນດາຄຳແນະນຳຂອງເຮົາ
ແລະບໍ່ຍອມຮັບຄຳຕັກເຕືອນຂອງເຮົາເລີຍ
26 ຝ່າຍເຮົາຈະຫົວເຍາະເຍີ້ຍຄວາມຈິບຫາຍຂອງເຈົ້າ
ເຮົາຈະເຍາະເຍີ້ຍເມື່ອຄວາມຢ້ານອັນຫລວງຫລາຍກະທົບເຈົ້າ
27 ເມື່ອຄວາມຕົກໃຈຢ້ານຈະມາເຖິງເຈົ້າ ຄືຄວາມຈິບຫາຍ
ແລະອັນຕະລາຍຈະມາຄືລົມຫົວກຸດ ແລະເມື່ອຄວາມຂັດສົນຈົນໃຈ
ແລະຄວາມລະທົມໃຈອັນໃຫຍ່ຫລວງມາເຖິງເຈົ້າ
28 ເມື່ອນັ້ນພວກເຂົາຈະຮ້ອງຫາເຮົາ ແຕ່ເຮົາຈະບໍ່ຕອບ
ພວກເຂົາຈະຊອກຫາເຮົາຕັ້ງແຕ່ເຊົ້າແຕ່ຈະບໍ່ພົບເຮົາ
29 ຍ້ອນພວກເຂົາໄດ້ກຽດຊັງຄວາມຮູ້
ແລະບໍ່ເລືອກເອົາຄວາມຢຳເກງພຣະຜູ້ເປັນເຈົ້າ
30 ເຂົາບໍ່ຮັບຄຳແນະນຳຂອງເຮົາເລີຍ

ແຕ່ພວກເຂົາໄດ້ໝິ່ນປະໝາດຄຳຕັກເຕືອນຂອງເຮົາທັງໝົດ.
31 ເພາະສະນັ້ນ, ພວກເຂົາຈະກິນຜົນແຫ່ງທາງຂອງຕົນ
ແລະອີ່ມໃຈດ້ວຍກົນວິທີຂອງພວກເຂົາເອງ
32 ເພາະວ່າການກະບົດຂອງພວກຄົນໂງ່ ກໍຈະຂ້າພວກເຂົາ
ແລະຄວາມຈະເລີນຂອງຄົນໂງ່ຈະທຳລາຍພວກເຂົາ
33 ແຕ່ຜູ້ທີ່ຟັງເຮົາຈະຢູ່ຢ່າງປອດໄພ
ເຂົາຈະຢູ່ຢ່າງສະຫງົບສຸກປາດສະຈາກຄວາມຢ້ານກົວໃນຄວາມຊົ່ວຮ້າຍ”

# ບົດທີ 2

## ພຣະເຈົ້າເປັນຜູ້ປະທານສະຕິປັນຍາ

1 ລູກຊາຍຂອງເຮົາເອີຍ ຖ້າເຈົ້າຮັບຖ້ອຍຄຳຂອງເຮົາ
ແລະສະສົມບັນດາຂໍ້ຄຳສັ່ງຂອງເຮົາໄວ້ຢູ່ໃນເຈົ້າ
2 ໃຫ້ຫູຂອງເຈົ້າຕັ້ງໃຈຟັງປັນຍາ
ແລະນ້ອມໃຈຂອງເຈົ້າເຂົ້າຫາຄວາມເຂົ້າໃຈ
3 ຖ້າເຈົ້າຮ້ອງຫາຄວາມຮອບຮູ້
ແລະເປັ່ງສຽງຂອງເຈົ້າຮ້ອງຫາຄວາມເຂົ້າໃຈ
4 ຖ້າເຈົ້າສະແຫວງຫາປັນຍາເໝືອນດັ່ງຊອກຫາເງິນ
ແລະຊອກຫາສິ່ງນັ້ນຄືຊອກຫາຊັບສົມບັດທີ່ເຊື່ອງໄວ້
5 ເມື່ອນັ້ນແຫລະ ເຈົ້າຈະເຂົ້າໃຈເຖິງຄວາມຢຳເກງພຣະຜູ້ເປັນເຈົ້າ
ແລະພົບຄວາມຮູ້ຂອງພຣະເຈົ້າ
6 ເພາະພຣະຜູ້ເປັນເຈົ້າຊົງປະທານປັນຍາ
ຄວາມຮູ້ແລະຄວາມເຂົ້າໃຈມາຈາກພຣະໂອດຂອງພຣະອົງ
7 ພຣະອົງມີຄຳເຕືອນສະຕິປັນຍາອັນດີໄວ້ໃຫ້ບັນດາຄົນຊອບທຳ
ພຣະອົງຊົງເປັນສິ່ງກຳບັງໃຫ້ແກ່ຜູ້ທີ່ດຳເນີນໃນຄວາມທ່ຽງທຳ
8 ພຣະອົງຊົງປົກປ້ອງຮັກສາບັນດາທາງຂອງຄວາມຍຸດຕິທຳ
ແລະຊົງສະຫງວນທາງຂອງໄພ່ພົນຂອງພຣະອົງໄວ້
9 ແລ້ວເຈົ້າຈະເຂົ້າໃຈຄວາມຊອບທຳ ແລະການຕັດສິນອັນຍຸດຕິທຳ
ແລະຄວາມທ່ຽງທຳ ຄືທາງໃນການດຳເນີນ ທີ່ດີທຸກຢ່າງ
10 ເມື່ອປັນຍາຈະເຂົ້າມາໃນໃຈຂອງເຈົ້າ
ແລະຄວາມຮູ້ຈະເປັນທີ່ຮື່ນເຢັນແກ່ຈິດໃຈຂອງເຈົ້າ
11 ຄວາມສະຫລຽວສະຫລາດຈະຄອຍເຝົ້າເຈົ້າ
ແລະຄວາມເຂົ້າໃຈຈະຄຸ້ມຄອງເຈົ້າໄວ້
12 ເພື່ອຊ່ວຍເຈົ້າໃຫ້ພົ້ນຈາກທາງຂອງຄົນຊົ່ວ

ຈາກຄົນທີ່ກ່າວຄຳຂີ້ສໍ້
13 ຈາກຄົນທັງຫຼາຍທີ່ປະຖິ້ມທາງແຫ່ງຄວາມສັດຊື່
ເພື່ອຍ່າງໃນທາງແຫ່ງຄວາມມືດ
14 ຜູ້ທີ່ມ່ວນຊື່ນໃນການເຮັດຄວາມຊົ່ວຮ້າຍ
ແລະມີໃຈຍິນດີໃນກົນອຸບາຍຂອງການຄົນຊົ່ວ
15 ຜູ້ຊຶ່ງຊີວິດຂອງພວກເຂົາດຳເນີນໃນທາງຄົດໂກງທັງຫຼາຍ
ແລະຫຼົງຜິດໃນທາງທັງຫຼາຍຂອງພວກເຂົາ
16 ເພື່ອຈະຊ່ວຍເຈົ້າໃຫ້ພົ້ນຈາກຍິງຊົ່ວ
ຈາກຍິງແພດສະຫຍາທີ່ເວົ້າຈາຮຽບຮ້ອຍ
17 ຜູ້ທີ່ປະຖິ້ມບຸກຄົນທີ່ແນະນຳຕົນເມື່ອຍັງເປັນສາວນັ້ນ
ແລະລືມຄຳໝັ້ນສັນຍາແຫ່ງພຣະເຈົ້າຂອງຕົນ
18 ເພາະເຮືອນຂອງຍິງນັ້ນເນີ້ງໄປຫາຄວາມຕາຍ
ແລະການດຳເນີນຊີວິດຂອງນາງກໍນຳໄປສູ່ເມືອງຜີ
19 ບັນດາຜູ້ທີ່ໄປຫານາງບໍ່ມີໃຜກັບມາຈັກຄົນ
ຫລືບໍ່ມີໃຜຫັນກັບມາເຖິງທາງແຫ່ງຊີວິດໄດ້ອີກ
20 ດັ່ງນັ້ນ, ເຈົ້າຄວນຈະດຳເນີນໃນທາງຂອງຄົນດີ
ແລະຮັກສາການດຳເນີນຊີວິດຂອງຄົນຊອບທຳ
21 ເພາະວ່າຄົນທີ່ທ່ຽງທຳຈະໄດ້ຢູ່ໃນແຜ່ນດິນ
ແລະຄົນດີຮອບຄອບຈະໝັ້ນຄົງຢູ່ໃນບ່ອນນັ້ນ
22 ແຕ່ຄົນຊົ່ວຮ້າຍຈະຖືກຕັດຂາດອອກຈາກແຜ່ນດິນໂລກ
ແລະຄົນລະເມີດຈະຖືກຖອນອອກຈາກບ່ອນນັ້ນ

# ບົດທີ 3

## ຈົ່ງຖວາຍກຽດແກ່ພຣະຜູ້ເປັນເຈົ້າຈຶ່ງຈະໄດ້ຮັບສະຕິປັນຍາ

1 ລູກຊາຍຂອງເຮົາເອີຍ
ຢ່າລືມຄຳສັ່ງສອນຂອງເຮົາແຕ່ໃຫ້ໃຈຂອງເຈົ້າຮັກສາບັນຍັດຂອງເຮົາ
2 ເພາະສິ່ງເຫລົ່ານີ້ຈະເພີ່ມວັນເດືອນປີ,
ຊີວິດຍືນຍາວ ແລະຄວາມສຸກສົມບູນແກ່ເຈົ້າ
3 ຢ່າໃຫ້ຄວາມເມດຕາແລະຄວາມຈິງປະຖິ້ມເຈົ້າ
ຈົ່ງຜູກມັນໄວ້ທີ່ຄໍຂອງເຈົ້າ ຈົ່ງຂຽນມັນໄວ້ທີ່ສ່ວນເລິກທົ່ວ ໃຈຂອງເຈົ້າ
4 ດັ່ງນັ້ນ, ເຈົ້າຈະພົບຄວາມພໍໃຈ ແລະຄວາມເຂົ້າໃຈຮອບຄອບ
ໃນສາຍພຣະເນດພຣະເຈົ້າແລະໃນສາຍຕາມະນຸດ
5 ຈົ່ງໄວ້ວາງໃຈໃນພຣະຜູ້ເປັນເຈົ້າດ້ວຍສຸດໃຈຂອງເຈົ້າ

ແລະຢ່າເຊື່ອໝັ້ນຄວາມເຂົ້າໃຈຂອງຕົນເອງ
6 ຈົ່ງຍອມຮັບຮູ້ພຣະອົງໃນທຸກວິທີທາງຊີວິດຂອງເຈົ້າ
ແລະພຣະອົງຈະຊົງນຳໜ້າເຈົ້າໄປໃນທາງແຫ່ງ ການດຳເນີນຊີວິດຂອງເຈົ້ານັ້ນ
7 ໃນສາຍຕາຂອງຕົນເອງຢ່າຄິດວ່າຕົນເປັນຄົນສະຫລາດ
ຈົ່ງຢຳເກງພຣະຜູ້ເປັນເຈົ້າ ແລະຫັນໜີຈາກຄວາມຊົ່ວຮ້າຍ
8 ການເຮັດເຊັ່ນນີ້ຈະໃຫ້ສຸຂະພາບດີແກ່ເຈົ້າ
ແລະໃນກະດູກຂອງເຈົ້າຈະມີແຮງຂຶ້ນ
9 ຈົ່ງຖວາຍກຽດແກ່ພຣະຜູ້ເປັນເຈົ້າດ້ວຍວັດຖຸສິ່ງຂອງຂອງເຈົ້າ
ແລະດ້ວຍຜົນຜະລິດທຳອິດຈາກການປູກຝັງ
ແລະຈາກຜົນກຳໄລທັງໝົດຂອງເຈົ້າໄປຖວາຍແກ່ພຣະອົງ
10 ແລ້ວເລົ້າເຂົ້າຂອງເຈົ້າຈະເຕັມດ້ວຍຄວາມອຸດົມສົມບູນ
ແລະໄຫອະງຸ່ນຂອງເຈົ້າຈະລົ້ນດ້ວຍນ້ຳອະງຸ່ນໃໝ່
11 ລູກຊາຍຂອງເຮົາເອີຍ ຢ່າດູໝິ່ນປະໝາດການຕີສອນຂອງພຣະຜູ້ເປັນເຈົ້າ
ຫລືເບື່ອໜ່າຍຕໍ່ການຕັກເຕືອນຂອງພຣະອົງ
12 ເຫດວ່າພຣະຜູ້ເປັນເຈົ້າຊົງຮັກຄົນໃດພຣະອົງກໍຊົງຕີສອນຜູ້ນັ້ນ
ເໝືອນ ດັ່ງພໍ່ຕັກເຕືອນລູກຊາຍຜູ້ທີ່ເຂົາປີຕິຊື່ນຊົມ
13 ມະນຸດຜູ້ປະສົບປັນຍາ
ແລະຜູ້ໄດ້ຮັບຄວາມເຂົ້າໃຈກໍເປັນສຸກຫຼາຍແທ້ໜໍ
14 ເພາະວ່າໄດ້ປັນຍາກໍດີກວ່າໄດ້ເງິນ
ແລະກຳໄລຈາກປັນຍາກໍດີກວ່າຄຳທີ່ບໍລິສຸດ
15 ປັນຍາປະເສີດກວ່າແກ້ວພິລາທັງຫຼາຍ
ແລະບັນດາສິ່ງທີ່ເຈົ້າປາຖະໜາຈະປຽບກັບປັນຍາກໍບໍ່ໄດ້
16 ຊີວິດຍືນຍາວຢູ່ທີ່ມືຂວາຂອງປັນຍາ
ແລະໃນມືຊ້າຍມີຊັບສົມບັດອຸດົມຮັ່ງມີແລະກຽດຕິຍົດ
17 ວິຖີທາງຂອງປັນຍາເປັນທາງຂອງຄວາມປິຕິຍິນດີ
ແລະວິຖີທາງທັງຫຼາຍຂອງປັນຍານັ້ນຄືສັນຕິພາບ
18 ສະຕິປັນຍາເປັນຕົ້ນໄມ້ແຫ່ງຊີວິດແກ່ຜູ້ທີ່ຍຶດໝັ້ນມັນໄວ້
ແລະບັນດາຜູ້ທີ່ຖືມັນໄວ້ແໜ້ນກໍເປັນສຸກ
19 ພຣະຜູ້ເປັນເຈົ້າຊົງວາງຮາກແຜ່ນດິນໂລກໂດຍປັນຍາ
ພຣະອົງຊົງສະຖາປະນາຟ້າສະຫວັນໂດຍຄວາມເຂົ້າໃຈ
20 ໂດຍຄວາມຮູ້ຂອງພຣະອົງນ້ຳບາດານກໍປະທຸອອກມາ
ແລະເມກກໍຢາດນ້ຳໝອກລົງມາ
21 ລູກຊາຍຂອງເຮົາເອີຍ ຈົ່ງຮັກສາສະຕິປັນຍາແລະຄວາມສະຫລຽວສະຫລາດໄວ້

ຢ່າໃຫ້ທັງສອງນີ້ໜີໄປຈາກສາຍຕາຂອງເຈົ້າ
22 ດັ່ງນັ້ນທັງສອງສິ່ງຈະເປັນຊີວິດແກ່ຈິດໃຈຂອງເຈົ້າ
ແລະເປັນຄວາມງົດງາມປະດັບຄໍຂອງເຈົ້າ
23 ແລ້ວເຈົ້າຈະດຳເນີນໃນທາງຂອງເຈົ້າຢ່າງປອດໄພ
ແລະຕີນຂອງເຈົ້າຈະບໍ່ສະດຸດລົ້ມ
24 ເມື່ອເຈົ້ານອນ ເຈົ້າຈະບໍ່ຢ້ານ ເອີ
ເຈົ້າຈະນອນຫຼັບດ້ວຍຄວາມສຸກສະບາຍ
25 ຢ່າຢ້ານ ສິ່ງທີ່ເຮັດໃຫ້ຕົກໃຈທີ່ມາເຖິງປະຈຸບັນທັນດ່ວນ
ຫລືຢ້ານຄວາມຈິບຫາຍຂອງຄົນຊົ່ວຮ້າຍທີ່ເກີດຂຶ້ນ
26 ເພາະ**ພຣະຜູ້ເປັນເຈົ້າ**ຈະຊົງເປັນຄວາມໄວ້ວາງໃຈຂອງເຈົ້າ
ແລະພຣະອົງຈະຊົງຮັກສາຕີນຂອງເຈົ້າ ບໍ່ໃຫ້ຖືກບ້ວງແຮ້ວ
27 ຢ່າຍຶດຄວາມດີໄວ້ຈາກຜູ້ທີ່ສົມຄວນຈະໄດ້ຮັບ
ໃນເມື່ອສິ່ງນີ້ຢູ່ໃນມືທີ່ມີອຳນາດຂອງເຈົ້າທີ່ສາມາດເຮັດໄດ້
28 ຖ້າເຈົ້າມີສິ່ງຂອງຢູ່ນຳເຈົ້າ ຢ່າບອກເພື່ອນບ້ານຂອງເຈົ້າວ່າ
“ຈົ່ງໄປກ່ອນ ແລ້ວມື້ອື່ນຈຶ່ງກັບມາອີກ ແລະຂ້ອຍຈະເອົາສິ່ງຂອງນັ້ນໃຫ້ແກ່ເຈົ້າ”
29 ຢ່າວາງແຜນງານຊົ່ວຮ້າຍຕໍ່ເພື່ອນບ້ານຂອງເຈົ້າ
ຜູ້ອາໄສທີ່ໄວ້ວາງໃຈຢູ່ຂ້າງໆເຈົ້າ
30 ຢ່າໂຕ້ຖຽງກັບຜູ້ໃດຜູ້ໜຶ່ງໂດຍຂາດເຫດຜົນ
ໃນເມື່ອຜູ້ນັ້ນບໍ່ໄດ້ເຮັດອັນຕະລາຍຢ່າງໃດແກ່ເຈົ້າ
31 ຢ່າອິດສາຄົນຊົ່ວຮ້າຍທາລຸນ
ຢ່າເລືອກທາງໃດໆຂອງເຂົາເລີຍ
32 ເພາະຄົນປະຈິບປະແຈງເປັນທີ່ກຽດຊັງຕໍ່**ພຣະຜູ້ເປັນເຈົ້າ**
ແຕ່ຄວາມເລິກລັບຂອງພຣະອົງນັ້ນມີຢູ່ກັບຄົນຊອບທຳ
33 ຄຳສາບແຊ່ງຂອງ**ພຣະຜູ້ເປັນເຈົ້າ**ຢູ່ເທິງເຮືອນຂອງຄົນຊົ່ວຮ້າຍ
ແຕ່ພຣະອົງຊົງອວຍພຣະພອນແກ່ບ່ອນຢູ່ອາໄສຂອງບັນດາຄົນຍຸດຕິທຳ
34 ແນ່ນອນພຣະອົງຊົງເຍາະເຍີ້ຍຄົນທີ່ມັກເຍາະເຍີ້ຍ
ແຕ່ພຣະອົງຊົງປະທານພຣະຄຸນແກ່ຄົນທີ່ຖ່ອມໃຈລົງ
35 ຄົນສະຫລາດຈະໄດ້ກຽດເປັນມໍລະດົກ
ແຕ່ຄົນໂງ່ຈະໄດ້ຄວາມອັບອາຍເປັນຕຳແໜ່ງ

# ບົດທີ 4

## ສະຕິປັນຍາຈາກພໍ່

1 ບຸດຊາຍທັງຫລາຍເອີຍ ຈົ່ງຟັງຄຳສັ່ງສອນຂອງພໍ່ເຈົ້າ

ໃຫ້ຕັ້ງໃຈຟັງເພື່ອເຈົ້າຈະໄດ້ຮັບຄວາມເຂົ້າໃຈ
2 ເພາະເຮົາສອນເຈົ້າທັງຫຼາຍໃຫ້ຮູ້ຈັກຄຳໂອວາດອັນປະເສີດ
ຢ່າປະຖິ້ມຄຳສັ່ງສອນຂອງເຮົາ
3 ເພາະແຕ່ກ່ອນເຮົາເປັນລູກຊາຍຂອງພໍ່ ເປັນທີ່ອ່ອນໂຍນ
ແລະເປັນທີ່ຮັກຍິ່ງໃນສາຍຕາຂອງແມ່ເຮົາ
4 ພໍ່ໄດ້ສັ່ງສອນ ແລະບອກເຮົາວ່າ "ໃຫ້ໃຈຂອງເຈົ້າຈື່ຈຳຖ້ອຍຄຳທັງຫຼາຍຂອງເຮົາ
ຈົ່ງຮັກສາບັນຍັດຂອງເຮົາແລະເຈົ້າຈະມີຊີວິດຢູ່
5 ຢ່າລືມ ແລະຢ່າຫັນຫລັງໜີຈາກຖ້ອຍຄຳທັງຫຼາຍຈາກປາກຂອງເຮົາ
ຈົ່ງເອົາປັນຍາ ແລະເອົາຄວາມເຂົ້າໃຈຮັກສາໄວ້
6 ຢ່າປະຖິ້ມປັນຍາ ແລະມັນຈະຮັກສາເຈົ້າໄວ້
ຈົ່ງຮັກປັນຍາ ແລະມັນຈະຄຸ້ມຄອງເຈົ້າໄວ້
7 ປັນຍາເປັນສິ່ງສຳຄັນທີ່ສຸດ ສະນັ້ນ ຈົ່ງເອົາປັນຍາໄວ້
ແມ່ນເຈົ້າຈະໄດ້ຫຍັງກໍຕາມ ຈົ່ງເອົາຄວາມເຂົ້າໃຈໄວ້
8 ຈົ່ງນັບຖືປັນຍາ ແລະມັນຈະຍົກຍ້ອງເຈົ້າຂຶ້ນ
ແລະຖ້າເຈົ້າກອດປັນຍາໄວ້ ມັນຈະໃຫ້ກຽດເຈົ້າ
9 ປັນຍາຈະເອົາກະໂຈມງາມສວມຫົວເຈົ້າ
ນາງຈະໃຫ້ມົງກຸດແຫ່ງສະຫງ່າລາສີປະທານໃຫ້ແກ່ເຈົ້າ"
10 ລູກຊາຍຂອງເຮົາເອີຍ ຈົ່ງຟັງ ແລະຮັບຖ້ອຍຄຳທັງຫຼາຍຂອງເຮົາ
ເພື່ອປີເດືອນແຫ່ງຊີວິດຂອງເຈົ້າຈະຍືນຍາວ
11 ເຮົາໄດ້ສອນເຈົ້າໃຫ້ຮູ້ຈັກທາງປັນຍາແລ້ວ
ເຮົາໄດ້ນຳເຈົ້າໃນການດຳເນີນຊີວິດຂອງຄວາມທ່ຽງທຳ
12 ເມື່ອເຈົ້າຍ່າງໄປ ບາດຕີນຂອງເຈົ້າຈະບໍ່ມີສິ່ງຂັດຂວາງ
ແລະເມື່ອເຈົ້າແລ່ນ ເຈົ້າຈະບໍ່ເຕາະສະດຸດ
13 ຈົ່ງຍຶດຖືຄຳສັ່ງສອນໄວ້ໃຫ້ໝັ້ນຄົງ ແລະຢ່າປ່ອຍໄປ
ຈົ່ງຖືຮັກສາໄວ້ເພາະຄຳສັ່ງສອນນັ້ນເປັນຊີວິດຂອງເຈົ້າ
14 ຢ່າເຂົ້າໄປໃນການດຳເນີນຊີວິດຂອງຄົນຊົ່ວຮ້າຍ
ແລະຢ່າຍ່າງໃນທາງຂອງພວກຄົນອະທຳ
15 ຈົ່ງຫລີກເວັ້ນ ຢ່າຍ່າງໄປ
ຈົ່ງລ້ຽວອອກ ແລະຈົ່ງກາຍໄປ
16 ພວກເຂົານອນບໍ່ຫລັບ ຖ້າພວກເຂົາບໍ່ໄດ້ເຮັດຄວາມຜິດ
ແລະ ຖ້າພວກເຂົາບໍ່ໄດ້ເຮັດໃຫ້ຄົນອື່ນຊູນສະດຸດ ພວກເຂົາຈະຫລັບລົງບໍ່ໄດ້
17 ເພາະພວກເຂົາກິນອາຫານຂອງຄວາມຊົ່ວຮ້າຍ
ແລະດື່ມເຫລົ້າອະງຸ່ນແຫ່ງຄວາມທາລຸນ

18 ແຕ່ການດຳເນີນຊີວິດຂອງຄົນຊອບທຳເໝືອນດັ່ງແສງອາລຸນ
ຊຶ່ງສ່ອງແສງລັດສະໝີແຈ້ງຂຶ້ນໆຈົນເຖິງກາງເວັນ
19 ທາງຂອງຄົນຊົ່ວຮ້າຍກໍເໝືອນກັບຄວາມມືດມິດ
ພວກເຂົາບໍ່ຮູ້ວ່າ ຕົນສະດຸດອັນໃດ
20 ລູກຊາຍຂອງເຮົາເອີຍ ຈົ່ງເອົາໃຈໃສ່ຟັງຖ້ອຍຄຳທັງຫຼາຍຂອງເຮົາ
ຈົ່ງຫງ່ຽງຫູຟັງຄຳເວົ້າຈາຂອງເຮົາ
21 ຢ່າໃຫ້ມັນໜີໄປຈາກສາຍຕາຂອງເຈົ້າ
ຈົ່ງຮັກສາມັນໄວ້ພາຍໃນໃຈຂອງເຈົ້າ
22 ເພາະວ່າມັນເປັນຊີວິດແກ່ຜູ້ທີ່ຄົ້ນພົບຄຳນັ້ນ
ແລະໃຫ້ສຸຂະພາບດີແກ່ເນື້ອກາຍຂອງຜູ້ນັ້ນທັງໝົດ
23 ຈົ່ງຮັກສາໃຈຂອງເຈົ້າໄວ້ໃຫ້ດີ ດີກວ່າສິ່ງທັງຫຼາຍທີ່ເຈົ້າຮັກສາໄວ້ນັ້ນ
ເພາະແຫລ່ງແຫ່ງຊີວິດເລີ່ມຕົ້ນອອກມາຈາກໃຈ
24 ປາກທີ່ເວົ້າຄຳບໍ່ຈິງຈົ່ງໃຫ້ໜີໄກຈາກເຈົ້າ ແລະຮີມສົບທີ່ເວົ້າບໍ່ສັດຊື່
ໃຫ້ຢູ່ຫ່າງໄກຈາກເຈົ້າເຖີ້ນ
25 ໃຫ້ຕາຂອງເຈົ້າເບິ່ງຊື່ໄປທາງໜ້າ
ແລະໃຫ້ໜັງຕາຂອງເຈົ້າເບິ່ງໄປທາງໜ້າຂອງເຈົ້າ
26 ຈົ່ງພິຈາລະນາທາງທີ່ຕີນຂອງເຈົ້າດຳເນີນໄປ
ແລ້ວທາງທັງໝົດຂອງເຈົ້າຈະໝັ້ນຄົງ
27 ຢ່າແວະໄປຂ້າງຂວາ ຫລືຫັນມາຂ້າງຊ້າຍ
ຈົ່ງໃຫ້ຕີນຂອງເຈົ້າຫັນໜີຈາກຄວາມຊົ່ວຮ້າຍເຖີ້ນ

# ບົດທີ 5

## ຈົ່ງລະວັງຜູ້ຍິງຊົ່ວ

1 ລູກຊາຍຂອງເຮົາເອີຍ ຈົ່ງຕັ້ງໃຈຕໍ່ປັນຍາຂອງເຮົາ
ຈົ່ງຫງ່ຽງຫູຂອງເຈົ້າຟັງຄວາມເຂົ້າໃຈຂອງເຮົາ
2 ເພື່ອເຈົ້າຈະຮັກສາຄວາມສະຫລຽວສະຫລາດໄວ້
ແລະຮີມປາກຂອງເຈົ້າຈະຄຸ້ມຄອງຄວາມຮູ້
3 ເພາະຮີມປາກຂອງຍິງຊົ່ວນັ້ນກໍຢາດນໍ້າເຜີ້ງອອກມາ
ແລະປາກຂອງນາງກໍມື່ນຍິ່ງກວ່ານໍ້າມັນ
4 ແຕ່ໃນທີ່ສຸດ ນາງຂົມຂື່ນເໝືອນຢ່າງເຄືອເຂົາຮໍ
ແລະຄົມກວ່າດາບສອງຄົມ
5 ຕີນຂອງນາງກ້າວລົງໄປສູ່ຄວາມຕາຍ
ທາງເດີນຂອງນາງຕິດຕາມການດຳເນີນຊີວິດສູ່ນາລົກ

6 ຢ້ານວ່າເຈົ້າຈະສົນໃຈໃນການດຳເນີນຊີວິດ
ທາງຂອງນາງວົນວຽນໄປ ເພື່ອເຈົ້າຈະບໍ່ຮູ້
7 ສະນັ້ນ, ບຸດທັງຫລາຍເອີຍ ບັດນີ້ ຈົ່ງຟັງເຮົາ
ແລະຢ່າໜີຈາກຖ້ອຍຄຳແຫ່ງປາກຂອງເຮົາ
8 ຈົ່ງຫລີກທາງຂອງເຈົ້າໃຫ້ໄກຈາກນາງ
ຢ່າໄປໃກ້ປະຕູເຮືອນຂອງນາງ
9 ຢ້ານວ່າເຈົ້າຈະໃຫ້ກຽດຂອງເຈົ້າແກ່ຄົນອື່ນ
ແລະໃຫ້ປີເດືອນຂອງເຈົ້າແກ່ຄົນໂຫດຮ້າຍ
10 ຢ້ານວ່າແຂກແປກໜ້າຈະກິນຄວາມອຸດົມສົມບູນຂອງເຈົ້າຈົນອີ່ມ
ແລະແຮງງານຂອງເຈົ້າຕົກໄປໃນເຮືອນຂອງຄົນຕ່າງດ້າວ
11 ແລະເຖິງບັ້ນປາຍຊີວິດຂອງເຈົ້າ ເຈົ້າຄວນຄາງ ເມື່ອເນື້ອ
ແລະກາຍຂອງເຈົ້າຖືກລ້າງຜານ
12 ແລະເຈົ້າວ່າ "ຂ້າພະເຈົ້າເຄີຍກຽດຊັງຄຳສັ່ງສອນແທ້ໆ
ແລະຈິດໃຈຂອງຂ້າພະເຈົ້າໝິ່ນປະໝາດການຕັກເຕືອນ
13 ຂ້າພະເຈົ້າບໍ່ເຄີຍເຊື່ອຟັງສຽງຄູຂອງຂ້າພະເຈົ້າ
ຫລືຫງ່ຽງຫູໃຫ້ແກ່ຜູ້ສັ່ງສອນຂອງຂ້າພະເຈົ້າ
14 ຂ້າພະເຈົ້າໃກ້ຈະລົ້ມລະລາຍສູ່ຄວາມຈິບຫາຍຢູ່ແລ້ວ
ໃນໝູ່ຊຸມນຸມຊົນ ແລະຄົນທີ່ປະຊຸມກັນຢູ່ນັ້ນ"
15 ຈົ່ງດື່ມນ້ຳຈາກຖັງເກັບນ້ຳຂອງເຈົ້າ
ດື່ມນ້ຳໄຫລຈາກບໍ່ຂອງເຈົ້າເອງ
16 ຈົ່ງໃຫ້ນ້ຳພຸຂອງເຈົ້າໄຫລ ເພື່ອອອກໄປນອກເຮືອນ
ແລະໃຫ້ທານນ້ຳນັ້ນໄຫລໄປຕາມຖະໜົນ
17 ຈົ່ງໃຫ້ມັນເປັນຂອງເຈົ້າແຕ່ຜູ້ດຽວ
ແລະບໍ່ແມ່ນສຳລັບຄົນແປກໜ້າດ້ວຍ
18 ຈົ່ງໃຫ້ນ້ຳພຸຂອງເຈົ້າໄດ້ຮັບພອນ
ແລະເປັນສຸກຍິນດີຢູ່ກັບເມຍຄົນທີ່ເຈົ້າໄດ້ເມື່ອຕອນເປັນໜຸ່ມນັ້ນ
19 ຈົ່ງໃຫ້ນາງເໝືອນນາງກວາງທີ່ໜ້າຮັກ
ກວາງແມ່ທີ່ງາມສະຫງ່າ ຈົ່ງໃຫ້ເຕົ້ານົມຂອງເມຍເຈົ້າເປັນທີ່ສົນໃຈເຈົ້າຢູ່ທຸກເວລາ
ຈົ່ງເພີດເພີນຢູ່ກັບຄວາມຮັກຂອງນາງສະເໝີ
20 ລູກຊາຍຂອງເຮົາເອີຍ ເຈົ້າຈະເພີດເພີນຢູ່ກັບຍິງຊົ່ວຢູ່ບໍ
ແລະໂອບກອດນາງເພດສະຫຍາຢູ່ເຮັດຫຍັງ
21 ເພາະວ່າທາງຂອງຄົນກໍຢູ່ໃນສາຍພຣະເນດພຣະຜູ້ເປັນເຈົ້າ
ແລະພຣະອົງຊົງເຝົ້າເບິ່ງການດຳເນີນຊີວິດທັງໝົດຂອງລາວ

22 ຄວາມຊົ່ວຊ້າຂອງຄົນຊົ່ວຮ້າຍຈະດັກຈັບລາວເອງ
ແລະລາວກໍຈະຕິດຢູ່ກັບຕາຂ່າຍບາບຂອງຕົນ
23 ລາວຈະຕາຍໂດຍປາດສະຈາກຄຳສັ່ງສອນ
ແລະເພາະຄວາມໂງ່ຈ້າຂອງລາວ ທີ່ໄດ້ຫລົງເຮັດບາບ

# ບົດທີ 6

## ຄຳເຕືອນເລື່ອງການຄ້ຳປະກັນ ການຂີ້ຄ້ານ ຄວາມຈອງຫອງ ການເປັນພະຍານບໍ່ຈິງ ແລະການຜິດປະເວນີ

1 ລູກຊາຍຂອງເຮົາເອີຍ ຖ້າເຈົ້າເປັນຜູ້ປະກັນເພື່ອນຂອງເຈົ້າ
ໄດ້ເຮັດສັນຍາໃຫ້ແກ່ຄົນແປກໜ້າ
2 ເຈົ້າຈຶ່ງຕິດບ້ວງແຮ້ວ ເພາະຄຳຈາກປາກຂອງເຈົ້າ
ແລະເຈົ້າຕິດກັບດັກ ເພາະຄຳເວົ້າຈາກປາກຂອງເຈົ້າ
3 ລູກຊາຍຂອງເຮົາເອີຍ ຈົ່ງເຮັດຢ່າງນີ້ ແລະຊ່ວຍຕົວເຈົ້າໃຫ້ລອດພົ້ນສາ
ເພາະເມື່ອເຈົ້າຕົກຢູ່ໃນກຳມືເພື່ອນຂອງເຈົ້າແລ້ວ
ຈົ່ງຮີບໄປອ້ອນວອນເພື່ອນຂອງເຈົ້າ
4 ຢ່າໃຫ້ຕາຂອງເຈົ້າຫລັບລົງ
ຢ່າໃຫ້ໜັງຕາຂອງເຈົ້າຫລັບໄປ
5 ຈົ່ງຫລົບຕົວຂອງເຈົ້າຈາກໄພ ເໝືອນຢ່າງກວາງທີ່ຫລົບຕົວຈາກມືຂອງພານ
ເໝືອນຢ່າງນົກຈາກມືຂອງຄົນຈັບນົກ
6 ຄົນຂີ້ຄ້ານເອີຍ ຈົ່ງໄປຫາມົດ
ຈົ່ງພິຈາລະນາເບິ່ງທາງຂອງມັນ ແລະຈົ່ງສະຫລາດ
7 ໂດຍປາດສະຈາກຜູ້ນຳທາງ
ຜູ້ເບິ່ງແຍງ ຫລືຜູ້ປົກຄອງ
8 ມັນຕຽມອາຫານຂອງມັນໃນລະດູແລ້ງ
ແລະຮວບຮວມຂອງກິນຂອງມັນໃນລະດູເກັບກ່ຽວ
9 ຄົນຂີ້ຄ້ານເອີຍ ເຈົ້າຈະນອນດົນເທົ່າໃດ
ເມື່ອໃດເຈົ້າຈະລຸກຂຶ້ນຈາກການຫລັບນອນ
10 ຫລັບອີກໜ້ອຍໜຶ່ງ ເຊືອບອີກຈັກໜ້ອຍ
ກອດມືພັກອີກຈັກບຶດໜຶ່ງ
11 ຄວາມທຸກຈະມາເຖິງເຈົ້າເໝືອນຢ່າງໂຈນ
ແລະຄວາມຂັດສົນເໝືອນຢ່າງຄົນຖືອາວຸດ
12 ຄົນບໍ່ໄວ້ວາງໃຈ ຄືຄົນຊົ່ວຮ້າຍ
ທີ່ທ່ຽວໄປດ້ວຍປາກຄົດໂກງ

13 ຕາຂອງລາວກໍຍິກຄິ້ວ ຕີນຂອງລາວກໍກ້າວອອກ
ນິ້ວຂອງເຂົາກໍຊີ້ໄປ
14 ປະດິດຄວາມຊົ່ວຮ້າຍຢູ່ເລື້ອຍໄປດ້ວຍໃຈປະຈົບປະແຈງ
ຫວ່ານຄວາມແຕກແຍກ
15 ເພາະສະນັ້ນ ຄວາມຈິບຫາຍຈະມາເຖິງລາວຢ່າງທັນດ່ວນ
ລາວຈະແຕກຫັກແບບສ້ອມແປງບໍ່ໄດ້
16 ມີຫົກສິ່ງ ຊຶ່ງພຣະຜູ້ເປັນເຈົ້າຊົງກຽດຊັງ ເອີ
ມີເຈັດສິ່ງ ຊຶ່ງເປັນທີ່ໜ້າກຽດຊັງສຳລັບພຣະອົງ
17 ຕາຈອງຫອງ ລີ້ນຂີ້ຕົວະ
ແລະມືທີ່ເຮັດໃຫ້ເລືອດບໍ່ມີຄວາມຜິດໄຫລ
18 ຈິດໃຈທີ່ຄິດແຜນການຊົ່ວຮ້າຍ
ຕີນ ຊຶ່ງຮີບຮ້ອນແລ່ນໄປຫາຄວາມຊົ່ວ
19 ພະຍານບໍ່ຈິງ ຊຶ່ງເວົ້າຂີ້ຕົວະ
ແລະຄົນຜູ້ຫວ່ານຄວາມແຕກແຍກທ່າມກາງພວກພີ່ນ້ອງ
20 ລູກຊາຍຂອງເຮົາເອີຍ ຈົ່ງຮັກສາບັນຍັດຂອງພໍ່ເຈົ້າ
ແລະຢ່າປະຖິ້ມຄຳສັ່ງສອນຂອງແມ່ເຈົ້າ
21 ມັດມັນຕິດໄວ້ເທິງໃຈຂອງເຈົ້າສະເໝີ
ຜູກມັນໄວ້ທີ່ຄໍຂອງເຈົ້າ
22 ເມື່ອເຈົ້າຍ່າງມັນຈະນຳເຈົ້າ ເມື່ອເຈົ້ານອນລົງມັນຈະເຝົ້າເຈົ້າ
ແລະເມື່ອເຈົ້າຕື່ນຂຶ້ນມັນຈະເວົ້າກັບເຈົ້າ
23 ເພາະພຣະບັນຍັດເປັນຕະກຽງ ແລະຄຳສັ່ງສອນເປັນແສງສະຫວ່າງ
ແລະຄຳຕັກເຕືອນແຫ່ງການສັ່ງສອນເປັນທາງແຫ່ງຊີວິດ
24 ເພື່ອສະຫງວນເຈົ້າໄວ້ຈາກຍິງຊົ່ວຮ້າຍ
ຈາກລີ້ນຮຽບຮ້ອຍຂອງຍິງເພດສະຫຍາ
25 ຢ່າປາດຖະໜາຄວາມງາມຂອງນາງຢູ່ໃນໃຈຂອງເຈົ້າ
ຢ່າໃຫ້ນາງຈັບເຈົ້າດ້ວຍໜັງຕາຂອງນາງ
26 ເພາະໂດຍວິທີການຂອງຍິງເພດສະຫຍາ
ຊາຍຄົນໃດອາດເຫລືອພຽງຂະໜົມປັງກ້ອນດຽວໄດ້
ແລະຍິງຫລິ້ນຊູ້ສາມາດຂ້າຊີວິດປະເສີດຂອງຊາຍໄດ້
27 ຜູ້ຊາຍຈະຫອບໄຟໄວ້ທີ່ເອິກຂອງລາວ
ໂດຍບໍ່ໃຫ້ເສື້ອຜ້າຂອງລາວໄໝ້ໄດ້ບໍ
28 ຫລືຜູ້ໃດຈະຍ່າງເທິງຖ່ານທີ່ລຸກກ້າ
ໂດຍບໍ່ໃຫ້ຕີນຂອງລາວຖືກໄຟລວກໄດ້ບໍ

29 ບຸກຄົນຜູ້ເຂົ້າຫາເມຍຂອງເພື່ອນບ້ານກໍເປັນຢ່າງນັ້ນແຫລະ
ບໍ່ມີຜູ້ໃດທີ່ແຕະຕ້ອງນາງແລ້ວຈະບໍ່ມີຄວາມຜິດ
30 ຖ້າຂີ້ລັກເຂົ້າລັກເຄື່ອງ ເພື່ອບັນເທົາຄວາມຢາກເມື່ອລາວຫິວ
ຄົນບໍ່ດູໝິ່ນຂີ້ລັກນັ້ນບໍ່ແມ່ນບໍ
31 ຖ້າຈັບລາວໄດ້ ລາວຕ້ອງຊຳລະຄືນເຈັດເທົ່າ
ລາວຈະຕ້ອງໃຫ້ສິ່ງຂອງທັງໝົດໃນເຮືອນຂອງລາວ
32 ແຕ່ຜູ້ໃດທີ່ລ່ວງປະເວນີກັບຜູ້ຍິງຄົນໜຶ່ງ
ກໍຂາດຄວາມເຂົ້າໃຈ ຜູ້ໃດທີ່ເຮັດຢ່າງນັ້ນ ກໍທຳລາຍຈິດໃຈຕົນເອງ
33 ລາວໄດ້ຮັບບາດແຜ ແລະຄວາມອັບອາຍ
ແລະຈະລ້າງຄວາມຂາຍໜ້າຂອງຕົນບໍ່ໄດ້
34 ເພາະຄວາມອິດສາເຮັດໃຫ້ຄົນໂຫດຮ້າຍ
ໃນມື້ທີ່ແກ້ແຄ້ນລາວຈະບໍ່ເບົາມື
35 ລາວຈະບໍ່ຮັບຄ່າເຮັດຂວັນໃດໆ ເຖິງເຈົ້າຈະເພີ່ມຂອງກຳນັນ
ລາວກໍບໍ່ຍອມສະຫງົບ

# ບົດທີ 7

## ຈົ່ງລະວັງການດຳເນີນຕາມທາງຂອງຍິງຊົ່ວ

1 ລູກຊາຍຂອງເຮົາເອີຍ ຈົ່ງຮັກສາຖ້ອຍຄຳຂອງເຮົາ
ຈົ່ງສະສົມຂໍ້ບັນຍັດຂອງເຮົາໄວ້ກັບເຈົ້າ
2 ຈົ່ງຮັກສາຂໍ້ບັນຍັດຂອງເຮົາ ແລະດຳເນີນຊີວິດຢູ່
ຈົ່ງຮັກສາຄຳສອນຂອງເຮົາເໝືອນດັ່ງແກ້ວຕາຂອງເຈົ້າ
3 ມັດມັນໄວ້ທີ່ນີ້ວມືຂອງເຈົ້າ
ຂຽນມັນໄວ້ເທິງແຜ່ນຈາລຶກແຫ່ງໃຈຂອງເຈົ້າ
4 ຈົ່ງເວົ້າກັບປັນຍາວ່າ “ນາງເປັນເອື້ອຍຂອງຂ້ອຍ”
ແລະ ຈົ່ງເອີ້ນຄວາມເຂົ້າໃຈວ່າ “ຍາດຜູ້ຍິງ”
5 ເພື່ອປັນຍານີ້ຈະຮັກສາເຈົ້າໄວ້ໃຫ້ພົ້ນຈາກຍິງຊົ່ວ
ຈາກຍິງເພດສະຫຍາທີ່ເວົ້າຈາຮຽບຮ້ອຍ
6 ເພາະເຮົາໄດ້ເບິ່ງອອກໄປທີ່ປ່ອງຢ້ຽມເຮືອນຂອງເຮົາ
7 ເຮົາເຫັນວ່າ ທ່າມກາງຄົນໂງ່ ແລະທ່າມກາງຄົນໜຸ່ມທີ່ເຮົາພິຈາລະນາເບິ່ງນັ້ນ
ກໍມີຄົນໜຸ່ມຜູ້ໜຶ່ງຂາດຄວາມເຂົ້າໃຈ
8 ຜ່ານໄປຕາມຖະໜົນໃກ້ທາງແຍກໄປເຮືອນຂອງນາງ
ຍ່າງຕາມຖະໜົນ ຊຶ່ງໄປຍັງເຮືອນນາງ
9 ໃນເວລາຄ້ອຍຄໍ່າ ຍາມແລງ ເວລາຄໍ່າຄືນ ແລະຄວາມມືດ

10 ແລະເບິ່ງແມ ຍິງຄົນໜຶ່ງມາພົບລາວ
ແຕ່ງຕົວເໝືອນກັບຍິງເພດສະຫຍາ ຫົວໃຈເລ້ຫລ່ຽມ
11 (ນາງຂີ້ຫ້າວ ແລະດື້ດ້ານ ຕີນຂອງນາງບໍ່ຢູ່ກັບເຮືອນ
12 ບຶດໜຶ່ງຢູ່ຫົນທາງ ບຶດໜຶ່ງຢູ່ຕາມໜົນທາງ ແລະນາງຄອຍຖ້າຢູ່ທຸກມຸມ)
13 ນາງຄຸບລາວໄດ້ ແລະຈູບລາວ
ນາງເວົ້າກັບລາວຢ່າງບໍ່ຮູ້ອາຍວ່າ
14 "ຂ້ອຍຈະຕ້ອງຖວາຍເຄື່ອງບູຊາ
ແລະມື້ນີ້ຂ້ອຍໄດ້ເຮັດຕາມຄຳປະຕິຍານແລ້ວ
15 ຂ້ອຍຈຶ່ງອອກມາຫາເຈົ້າ ຊອກຫາໜ້າເຈົ້າ
ແລະຂ້ອຍພົບເຈົ້າແລ້ວ
16 ຂ້ອຍໄດ້ປະດັບຕຽງນອນຂອງຂ້ອຍດ້ວຍຜ້າຄຸມ
ເປັນຜ້າລິນິນ ເອຢິບ ສີຕ່າງໆ
17 ຂ້ອຍໄດ້ອົບບ່ອນນອນຂອງຂ້ອຍດ້ວຍຢາງໄມ້ຫອມ
ນ້ຳຫອມອາໂລ ແລະກຳຍານຫອມ
18 ມາແມ ໃຫ້ເຮົາມາອີ່ມດ້ວຍຄວາມຮັກຈົນຮຸ່ງເຊົ້າ
ໃຫ້ເຮົາເຮັດຕົວຂອງເຮົາໃຫ້ປິຕິຍິນດີດ້ວຍຄວາມຮັກ
19 ເພາະຜົວຂອງຂ້ອຍບໍ່ຢູ່ເຮືອນ ລາວໄປທາງໄກ
20 ລາວເອົາເງິນໄປຖົງໜຶ່ງ ເມື່ອຄືນເພັງ ລາວຈຶ່ງກັບມາ"
21 ນາງເວົ້າອອຍດ້ວຍຄຳເວົ້າອ່ອນຫວານ
ນາງບັງຄັບລາວດ້ວຍຮີມປາກທີ່ເວົ້າຮຽບຮ້ອຍ
22 ລາວກໍຕິດຕາມນາງໄປທັນທີເໝືອນຢ່າງງົວໂຕຜູ້ໄປສູ່ການຂ້າ
ຫລືເໝືອນກັບຄົນໂງ່ທີ່ໄປຮັບໂທດຢູ່ຂື່
23 ຈົນລູກທະນູປັກເຂົ້າໄປເຖິງຕັບ ເໝືອນຢ່າງນົກຝືນເຂົ້າໄປຫາບ້ວງແຮ້ວ
ລາວບໍ່ຮູ້ວ່າມັນມີຄ່າເຖິງຊີວິດ
24 ສະນັ້ນ, ໂອ ບຸດທັງຫລາຍເອີຍ ບັດນີ້ ຈົ່ງຟັງເຮົາ
ແລະຈົ່ງຕັ້ງໃຈຕໍ່ຖ້ອຍຄຳຈາກປາກຂອງເຮົາ
25 ຢ່າໃຫ້ໃຈຂອງເຈົ້າຫັນໄປຕາມທາງຂອງນາງ
ຢ່າຫລົງທາງໄປໃນການດຳເນີນຊີວິດຂອງນາງນັ້ນ
26 ເພາະນາງໄດ້ຟາດເຫຍື່ອລົງເສຍເປັນຈຳນວນຫລາຍ
ເອີ ນາງໄດ້ຂ້າຊາຍທີ່ແຂງແຮງຈຳນວນຫລາຍແລ້ວ
27 ເຮືອນຂອງນາງເປັນທາງໄປສູ່ນາລົກ
ລົງໄປເຖິງຫ້ອງແຫ່ງຄວາມຕາຍ

# ບົດທີ 8

## ການສັນລະເສີນສະຕິປັນຍາ

1 ປັນຍາບໍ່ໄດ້ຮ້ອງເອີ້ນບໍ
ຄວາມເຂົ້າໃຈບໍ່ໄດ້ເປັ່ງສຽງຂອງນາງບໍ
2 ຢູ່ບ່ອນສູງຕາມແຄມທາງ
ຢູ່ກາງຖະໜົນນາງກໍຢືນຢູ່
3 ຂ້າງປະຕູ ໜ້າເມືອງ
ຢູ່ທາງເຂົ້າມຸກ ນາງກໍຮ້ອງສຽງດັງວ່າ
4 "ໂອ ບັນດາຜູ້ຊາຍເອີຍ ເຮົາເອີ້ນເຈົ້າ
ແລະສຽງເອີ້ນຂອງເຮົາໄປເຖິງລູກຊາຍຂອງມະນຸດ
5 ໂອ ຄົນໂງ່ ຈົ່ງເຂົ້າໃຈສະຕິປັນຍາ
ຄົນໂງ່ທັງຫລາຍ ຈົ່ງມີໃຈທີ່ເຂົ້າໃຈ
6 ຟັງເທີ້ນ ເພາະເຮົາຈະເວົ້າເຖິງສິ່ງທີ່ດີເລີດ
ເພາະສິ່ງທີ່ມັກຈະມາຈາກຮີມປາກຂອງເຮົາ
7 ເພາະປາກຂອງເຮົາຈະກ່າວຄວາມຈິງ
ຄວາມຊົ່ວຮ້າຍເປັນສິ່ງໜ້າກຽດຊັງຕໍ່ຮີມປາກຂອງເຮົາ
8 ບັນດາຄຳເວົ້າຂອງເຮົານັ້ນຊອບທຳ
ໃນນັ້ນບໍ່ມີຄຳບິດເບືອນ ຫລືຄຳຄົດລ້ຽວ
9 ຄຳເຫລົ່ານັ້ນສຳລັບຜູ້ທີ່ເຂົ້າໃຈກໍຖືກໝົດ
ສຳລັບຜູ້ພົບຄວາມຮູ້ກໍຖືກຕ້ອງ
10 ຈົ່ງຮັບຄຳສັ່ງສອນຂອງເຮົາແທນເງິນ
ແລະຄວາມຮູ້ແທນທອງຄຳຢ່າງດີ
11 ເພາະປັນຍາດີກວ່າທັບທິມ
ແລະສິ່ງທີ່ເຈົ້າປາດຖະໜາທັງໝົດຈະປຽບທຽບກັບປັນຍາບໍ່ໄດ້
12 ເຮົາຄືປັນຍາ ຢູ່ໃນຄວາມຮູ້ເທັນ
ແລະເຮົາພົບຄວາມຮູ້ແຫ່ງຄວາມສະຫລຽວສະຫລາດ
13 ຄວາມຢຳເກງພຣະຜູ້ເປັນເຈົ້າແມ່ນການກຽດຊັງຄວາມຊົ່ວຮ້າຍ
ເຮົາກຽດຊັງຄວາມຍິ່ງຈອງຫອງ ແລະຄວາມອວດຕົວ
ແລະທາງຂອງຄວາມຊົ່ວຮ້າຍກັບປາກປະຈົບປະແຈງ
14 ເຮົາມີຄຳຫາລື ແລະສະຕິປັນຍາ
ເຮົາມີຄວາມເຂົ້າໃຈ ເຮົາມີກຳລັງ
15 ໂດຍເຮົານີ້ແຫລະ ກະສັດຈຶ່ງປົກຄອງ
ແລະຜູ້ຄອບຄອງຈຶ່ງອອກຄຳສັ່ງກົດໝາຍທີ່ຍຸດຕິທຳ

16 ໂດຍເຮົານີ້ແຫລະ ເຈົ້ານາຍ ແລະຂ້າລາຊະການໄດ້ປົກຄອງ
ຄືບັນດາຜູ້ພິພາກສາຂອງແຜ່ນດິນໂລກ
17 ເຮົາຮັກບັນດາຜູ້ທີ່ຮັກເຮົາ
ແລະບັນດາຜູ້ທີ່ສະແຫວງຫາເຮົາຢ່າງຂະຫຍັນໝັ່ນພຽນກໍພົບເຮົາ
18 ຄວາມອຸດົມຮັ່ງມີ ແລະກຽດສັກສີຢູ່ກັບເຮົາ
ເອີ ທັງຊັບສົມບັດທີ່ທົນທານ ແລະຄວາມຊອບທຳ
19 ຜົນຂອງເຮົາດີກວ່າທອງຄຳ ເຖິງແມ່ນທອງເນື້ອດີ
ແລະຜົນໄດ້ຂອງເຮົາດີກວ່າເງິນເນື້ອບໍລິສຸດ
20 ເຮົານຳໃນທາງແຫ່ງຄວາມຊອບທຳ
ໃນການດຳເນີນຊີວິດທັງຫລາຍຂອງຄວາມຍຸດຕິທຳ
21 ມອບຜາສາດຊັບສົມບັດແກ່ບັນດາຜູ້ທີ່ຮັກເຮົາ
ບັນຈຸຄັງຊັບທັງຫລາຍຂອງພວກເຂົາໃຫ້ເຕັມ
22 **ພຣະຜູ້ເປັນເຈົ້າ**ຊົງເປັນເຈົ້າຂອງເຮົາ ໃນເມື່ອພຣະອົງຊົງເລີ່ມງານຂອງພຣະອົງ
ກ່ອນບັນດາພຣະລາຊະກິດບູຮານຂອງພຣະອົງ
23 ເຮົາຖືກສະຖາປະນາໄວ້ຕັ້ງແຕ່ດຶກດຳບັນມາແລ້ວ
ຕັ້ງແຕ່ແຮກກ່ອນຕົ້ນເດີມຂອງແຜ່ນດິນໂລກ
24 ເຮົາຖືກຳເນີດມາກ່ອນມີມະຫາສະໝຸດ
ເມື່ອບໍ່ມີນໍ້າພຸທີ່ມີນໍ້າຫລວງຫລາຍ
25 ກ່ອນການເນລະມິດສ້າງພູເຂົາ
ກ່ອນໂນນພູ ເຮົາກໍຖືກຳເນີດມາແລ້ວ
26 ກ່ອນທີ່ພຣະອົງຊົງສ້າງແຜ່ນດິນໂລກ ທັງໄຮ່ນາ
ຫລືກ່ອນຂີ້ຝຸ່ນດິນແຮກຂອງໂລກ
27 ເມື່ອພຣະອົງຊົງສະຖາປະນາຟ້າສະຫວັນ ເຮົາຢູ່ບ່ອນນັ້ນແລ້ວ
ເມື່ອພຣະອົງຊົງລາກເສັ້ນຮອບວົງເທິງພື້ນມະຫາສະໝຸດ
28 ເມື່ອພຣະອົງຊົງສະຖາປະນາຟ້າເບື້ອງເທິງ
ເມື່ອພຣະອົງຊົງສ້າງນໍ້າພຸຂອງນໍ້າບາດານໃຫ້ໝັ້ນໄວ້
29 ເມື່ອພຣະອົງຊົງກຳນົດເຂດຈຳກັດໃຫ້ແກ່ທະເລ
ເພື່ອວ່ານໍ້າຈະບໍ່ລະເມີດພຣະບັນຊາຂອງພຣະອົງ
ເມື່ອພຣະອົງຊົງປັກຮາກຖານຂອງໂລກ
30 ເຮົາຢູ່ຂ້າງພຣະອົງແລ້ວ ເໝືອນດັ່ງຜູ້ທີ່ພຣະອົງຊົງລ້ຽງດູ
ເຮົາເປັນຄວາມປິຕິຍິນດີປະຈຳວັນຂອງພຣະອົງ
ຊື່ນຊົມຍິນດີຢູ່ຕໍ່ພຣະພັກພຣະອົງສະເໝີ
31 ຄວາມຍິນດີໃນໂລກທີ່ມີຄົນອາໄສຂອງພຣະອົງ

ແລະປິຕິຍິນດີໃນບຸດທັງຫລາຍຂອງມະນຸດ
32 ບຸດທັງຫລາຍເອີຍ ບັດນີ້ ຈົ່ງຟັງເຮົາ
ບັນດາຜູ້ທີ່ຮັກສາທາງຂອງເຮົາ ກໍຢູ່ສຸກສະຫງົບ
33 ຈົ່ງຟັງຄຳສັ່ງສອນ ຈົ່ງສະຫລາດ ແລະຢ່າເມີນເສີຍ
34 ຜູ້ໃດທີ່ຟັງເຮົາກໍເປັນສຸກ ຄືເຝົ້າຢູ່ທີ່ປະຕູຮົ້ວຂອງເຮົາທຸກມື້
ແລະຄອຍຖ້າຢູ່ຂ້າງປະຕູເຮືອນຂອງເຮົາ
35 ເພາະຜູ້ໃດທີ່ພົບເຮົາກໍພົບຊີວິດ
ແລະໄດ້ຮັບຄວາມພໍພຣະໄທຈາກພຣະຜູ້ເປັນເຈົ້າ
36 ແຕ່ຜູ້ທີ່ຂາດເຮົາກໍເຮັດໃຫ້ຈິດໃຈຂອງຕົນເອງເຈັບປວດ
ບັນດາຜູ້ທີ່ກຽດຊັງເຮົາກໍຮັກຄວາມຕາຍ”

# ບົດທີ 9

## ຄວາມຢຳເກງພຣະຜູ້ເປັນເຈົ້າເປັນການເລີ່ມຕົ້ນຂອງສະຕິປັນຍາ

1 ປັນຍາໄດ້ສ້າງເຮືອນຂອງນາງແລ້ວ
ນາງໄດ້ຕັ້ງເສົາເຈັດຕົ້ນ
2 ນາງໄດ້ຂ້າສັດຂອງນາງ ໄດ້ປະສົມນໍ້າອະງຸ່ນ
ແລະ ໄດ້ຈັດໂຕະຂອງນາງແລ້ວ
3 ແລະໄດ້ສົ່ງສາວໃຊ້ຂອງນາງອອກໄປ
ສົ່ງສຽງເອີ້ນຈາກບ່ອນສູງທີ່ສຸດໃນເມືອງວ່າ
4 “ຜູ້ໃດທີ່ເປັນຄົນໂງ່ ໃຫ້ຫັນເຂົ້າມາບ່ອນນີ້”
ນາງເວົ້າກັບຜູ້ທີ່ຂາດຄວາມເຂົ້າໃຈວ່າ
5 “ມາແມ ມາຮັບປະທານຂະໜົມປັງຂອງເຮົາ
ແລະດື່ມນໍ້າອະງຸ່ນທີ່ເຮົາໄດ້ປະສົມ
6 ຈົ່ງຖິ້ມຄວາມໂງ່ຈ້າເສຍ ແລະດຳລົງຊີວິດຢູ່
ດຳເນີນໃນທາງຂອງຄວາມເຂົ້າໃຈນັ້ນສາ”
7 ຜູ້ທີ່ວ່າກ່າວຄົນມັກເຍາະເຍີ້ຍຈະໄດ້ຮັບຄວາມອັບອາຍ
ແລະຜູ້ທີ່ຕັກເຕືອນຄົນຊົ່ວຮ້າຍຈະໄດ້ຮັບຮອຍເປື້ອນເປິ
8 ຢ່າຕັກເຕືອນຄົນມັກເຍາະເຍີ້ຍ ເພາະລາວຈະກຽດຊັງເຈົ້າ
ຈົ່ງຕັກເຕືອນນັກປາດ ແລະລາວຈະຮັກເຈົ້າ
9 ຈົ່ງໃຫ້ຄຳສັ່ງສອນແກ່ນັກປາດ ແລະລາວຈະສະ ຫລາດຍິ່ງຂຶ້ນ
ຈົ່ງສອນຄົນຍຸດຕິທຳ ແລະລາວຈະເພີ່ມການຮຽນຮູ້ຫລາຍຂຶ້ນ
10 ຄວາມຢຳເກງພຣະຜູ້ເປັນເຈົ້າເປັນຈຸດເລີ່ມຕົ້ນຂອງປັນຍາ
ແລະການຮູ້ຈັກອົງບໍລິສຸດກໍເປັນຄວາມເຂົ້າໃຈ

11 ເນື່ອງຈາກເຮົາ ວັນຄືນຂອງເຈົ້າຈະເພີ່ມທະວີຄູນ
ແລະປີເດືອນແຫ່ງຊີວິດຂອງເຈົ້າຈະເພີ່ມພູນ
12 ຖ້າເຈົ້າສະຫລາດ ເຈົ້າກໍສະຫລາດເພື່ອຕົນເອງ
ຖ້າເຈົ້າເຍາະເຍີ້ຍ ເຈົ້າກໍຈະທຸກທົນແຕ່ຜູ້ດຽວ
13 ຍິງໂງ່ນັ້ນເຮັດສຽງດັງ
ນາງໂງ່ຈ້າ ແລະບໍ່ຮູ້ຫຍັງເລີຍ
14 ເພາະນາງນັ່ງທີ່ປະຕູເຮືອນຂອງນາງ
ແລະບ່ອນນັ່ງທີ່ສູງໃນເມືອງ
15 ຮ້ອງເອີ້ນບັນດາຜູ້ທີ່ຜ່ານໄປ
ຜູ້ຍ່າງໄປຕາມທາງຂອງພວກເຂົາວ່າ
16 "ຜູ້ໃດທີ່ເປັນຄົນໂງ່ ໃຫ້ຫັນເຂົ້າມາບ່ອນນີ້"
ນາງເວົ້າກັບຜູ້ຂາດຄວາມເຂົ້າໃຈວ່າ
17 "ນໍ້າທີ່ລັກມາຫວານດີ
ແລະເຂົ້າໜົມທີ່ຮັບປະທານໃນທີ່ລັບລີ້ກໍແຊບດີ"
18 ແຕ່ພວກເຂົາບໍ່ຮູ້ວ່າຄົນຕາຍຢູ່ບ່ອນນັ້ນ
ແລະແຂກຂອງນາງກໍຢູ່ໃນບ່ອນເລິກຂອງນາລົກ

# ບົດທີ 10

## ຄວາມໂງ່ຈ້າແຫ່ງຄວາມຊົ່ວຮ້າຍ
## ກົງກັນກັບສະຕິປັນຍາແຫ່ງຄວາມຊອບທຳ

1 ສຸພາສິດຂອງໂຊໂລໂມນ ລູກຊາຍທີ່ສະຫລາດເຮັດໃຫ້ພໍ່ຍິນດີ
ແຕ່ລູກຊາຍທີ່ໂງ່ເປັນຄວາມໂສກເສົ້າຂອງແມ່ລາວ
2 ຄັງຊັບຊົ່ວຮ້າຍບໍ່ເປັນກຳໄລ
ແຕ່ຄວາມຊອບທຳຊ່ວຍໃຫ້ພົ້ນຈາກຄວາມຕາຍ
3 ພຣະຜູ້ເປັນເຈົ້າ ຈະບໍ່ຊົງປ່ອຍໃຫ້ຈິດໃຈຄົນຊອບທຳອຶດຫິວ
ແຕ່ພຣະອົງຊົງປະຖິ້ມຊັບສົມບັດຂອງຄົນຊົ່ວຮ້າຍ
4 ມືທີ່ຂີ້ຄ້ານເປັນເຫດໃຫ້ເກີດຄວາມຍາກຈົນ
ແຕ່ມືທີ່ຂະຫຍັນໝັ່ນພຽນເຮັດໃຫ້ຮັ່ງມີ
5 ຜູ້ທີ່ຮວບຮວມໄວ້ໃນລະດູແລ້ງກໍເປັນລູກຊາຍທີ່ສະຫລາດ
ແຕ່ຜູ້ຫລັບນອນໃນລະດູເກັບກ່ຽວກໍເປັນລູກຊາຍທີ່ນຳຄວາມອັບອາຍມາ
6 ພຣະພອນຢູ່ເທິງຫົວຂອງຄົນຍຸດຕິທຳ
ແຕ່ຄວາມທາລຸນປົກຄຸມປາກຄົນຊົ່ວຮ້າຍ
7 ການລະນຶກເຖິງຄົນຍຸດຕິທຳເປັນພຣະພອນ

ແຕ່ຊື່ສຽງຂອງຄົນຊົ່ວຮ້າຍຈະເນົ່າເໝັນ
8 ຜູ້ທີ່ມີໃຈປະກອບດ້ວຍປັນຍາຈະຍອມຮັບບັນຍັດ
ແຕ່ຄົນທີ່ເວົ້າໂງ່ໆຈະລົ້ມລົງ
9 ຜູ້ໃດທີ່ດຳເນີນໃນຄວາມທ່ຽງທຳ ກໍດຳເນີນຢ່າງໝັ້ນຄົງດີ
ແຕ່ຜູ້ທີ່ເຮັດທາງຂອງຕົນໃຫ້ຊົ່ວກໍຈະປາກົດແຈ້ງແກ່ຄົນອື່ນ
10 ຜູ້ທີ່ຂະຫຍິບຕາ ກໍກໍ່ຄວາມໂສກເສົ້າ
ແຕ່ຄົນທີ່ເວົ້າໂງ່ໆຈະລົ້ມລົງ
11 ປາກຂອງຄົນຊອບທຳເປັນບໍ່ນໍ້າແຫ່ງຊີວິດ
ແຕ່ຄວາມທາລຸນປົກຄຸມປາກຄົນຊົ່ວຮ້າຍ
12 ຄວາມກຽດຊັງເຮັດໃຫ້ເກີດຄວາມຜິດກັນ
ແຕ່ຄວາມຮັກປົກຄຸມບັນດາຄວາມຜິດບາບເສຍ
13 ຮີມປາກຂອງຜູ້ທີ່ມີຄວາມເຂົ້າໃຈຈະພົບປັນຍາ
ແຕ່ໄມ້ແສ້ ກໍເໝາະສຳລັບຫລັງຂອງຜູ້ທີ່ຂາດຄວາມເຂົ້າໃຈ
14 ນັກປາດກໍຮອບຮວມຄວາມຮູ້ໄວ້
ແຕ່ປາກຂອງຄົນໂງ່ນຳຄວາມຈິບຫາຍມາໃກ້
15 ຊັບສົມບັດຂອງຄົນຮັ່ງມີຄືເມືອງອັນເຂັ້ມແຂງຂອງພວກເຂົາ
ແຕ່ຄວາມຍາກຈົນຂອງຄົນຈົນຄືຄວາມຈິບຫາຍຂອງພວກເຂົາ
16 ຜົນງານຂອງຄົນຊອບທຳນຳໄປເຖິງຊີວິດ
ແຕ່ຜົນຂອງຄົນຊົ່ວຮ້າຍນຳໄປເຖິງຄວາມບາບ
17 ຜູ້ທີ່ຮັກສາຄຳສັ່ງສອນກໍຢູ່ໃນການວິຖີທາງແຫ່ງຊີວິດ
ແຕ່ຜູ້ປະຕິເສດຄຳເຕືອນສະຕິ ກໍຫລົງເຮັດບາບເສຍ
18 ຜູ້ປິດບັງຄວາມກຽດຊັງດ້ວຍຮີມປາກຂີ້ຕົວະ
ແລະຜູ້ອອກປາກໃສ່ຮ້າຍ ກໍເປັນຄົນໂງ່
19 ການເວົ້າຫລາຍ ກໍຈະບໍ່ຂາດຄວາມຜິດບາບ
ແຕ່ຜູ້ຫ້າມຮີມປາກຂອງຕົນ ກໍເປັນຜູ້ທີ່ສະຫລາດ
20 ລີ້ນຂອງຄົນຍຸດຕິທຳ ກໍເໝືອນກັບເງິນເນື້ອບໍລິສຸດ
ຄວາມຄິດຂອງຄົນຊົ່ວຮ້າຍມີຄ່າແຕ່ໜ້ອຍດຽວ
21 ຮີມປາກຂອງຄົນຊອບທຳລ້ຽງຄົນເປັນຈຳນວນຫລາຍ
ແຕ່ຄົນໂງ່ຕາຍ ເພາະຂາດສະຕິປັນຍາ
22 ພຣະພອນຂອງພຣະຜູ້ເປັນເຈົ້າເຮັດໃຫ້ຮັ່ງມີ
ແລະພຣະອົງບໍ່ໄດ້ແຖມຄວາມໂສກເສົ້າໄວ້ດ້ວຍ
23 ຄົນໂງ່ເຮັດຄວາມຜິດເໝືອນກັບການຫລິ້ນສະໜຸກ
ແຕ່ຄົນທີ່ມີຄວາມເຂົ້າໃຈກໍປິ່ນດ້ວຍປັນຍາ

24 ສິ່ງໃດທີ່ຄົນຊົ່ວຮ້າຍຄິດຢ້ານ ມັນຈະມາເຖິງລາວ
ແຕ່ສິ່ງໃດທີ່ຄົນຊອບທຳປາດຖະໜາຈະຊົງປະທານໃຫ້
25 ລົມບ້າໝູຜ່ານໄປສັນໃດ ຄົນຊົ່ວກໍບໍ່ມີອີກສັນນັ້ນ
ແຕ່ຄົນຊອບທຳເປັນຮາກຖານທີ່ຢູ່ເປັນນິດ
26 ນໍ້າສົ້ມກັບແຂ້ວ ແລະຄວັນກັບຕາເປັນສັນໃດ
ຄົນຂີ້ຄ້ານກັບຜູ້ທີ່ໃຊ້ລາວໄປ ກໍເປັນຢ່າງນັ້ນ
27 ຄວາມຢຳເກງພຣະຜູ້ເປັນເຈົ້ານັ້ນຍືດຊີວິດໃຫ້ຍາວອອກ
ແຕ່ປີເດືອນຂອງຄົນຊົ່ວຮ້າຍນັ້ນຈະສັ້ນເຂົ້າ
28 ຄວາມຫວັງຂອງຄົນຊອບທຳຈະຈົບລົງໃນຄວາມຍິນດີ
ແຕ່ຄວາມມຸ້ງຫວັງຂອງຄວາມຊົ່ວຮ້າຍກໍຈະສູນເປົ່າ
29 ເສັ້ນທາງຂອງພຣະຜູ້ເປັນເຈົ້າຊົງເປັນກຳລັງແກ່ຜູ້ທ່ຽງທຳ
ແຕ່ຜູ້ເຮັດຄວາມຊົ່ວຊ້າຈະຖືກທຳລາຍ
30 ຜູ້ຊອບທຳຈະບໍ່ຖືກກຳຈັດເລີຍ
ແຕ່ຄົນຊົ່ວຮ້າຍຈະບໍ່ໄດ້ຢູ່ໃນແຜ່ນດິນ
31 ປາກຂອງຄົນຍຸດຕິທຳນຳປັນຍາອອກມາ
ແຕ່ລີ້ນຂອງຄົນປະຈົບປະແຈງຈະຖືກຕັດອອກ
32 ຮີມປາກຂອງຄົນຊອບທຳຮູ້ວ່າອັນໃດເໝາະສົມ
ແຕ່ປາກຂອງຄົນຊົ່ວຮ້າຍຮູ້ວ່າສິ່ງໃດປະຈົບປະແຈງ

# ບົດທີ 11

## ຄວາມຈິງປຽບກັບຄວາມບໍ່ຈິງ

1 ຕາຊິງສໍ້ໂກງນັ້ນເປັນທີ່ກຽດຊັງຕໍ່ພຣະຜູ້ເປັນເຈົ້າ
ແຕ່ໝາກໂຕ້ນທີ່ຍຸດຕິທຳເປັນທີ່ປິຕິຍິນດີແກ່ພຣະອົງ
2 ເມື່ອຄວາມຈອງຫອງມາເຖິງ ຄວາມອັບອາຍກໍມານຳ
ແຕ່ປັນຍາຢູ່ກັບຄົນຖ່ອມໃຈ
3 ຄວາມຊື່ສັດຂອງຄົນທ່ຽງທຳຍ່ອມນຳພວກເຂົາ
ແຕ່ຄວາມຄົດໂກງຂອງຄົນລະເມີດຍ່ອມທຳລາຍພວກເຂົາ
4 ຄວາມອຸດົມຮັ່ງມີບໍ່ອຳນວຍກຳໄລໃນມື້ຊົງພຣະພິໂລດ
ແຕ່ຄວາມຊອບທຳຊ່ວຍໃຫ້ພົ້ນຄວາມຕາຍ
5 ຄວາມຊອບທຳຂອງຄົນທີ່ຂາດຕຳໜິຍ່ອມຮັກສາທາງຂອງລາວໃຫ້ຊື່ໄປ
ແຕ່ຄົນຊົ່ວຮ້າຍຈະລົ້ມລົງດ້ວຍຄວາມຊົ່ວຮ້າຍຂອງລາວເອງ
6 ຄວາມຊອບທຳຂອງຄົນທ່ຽງທຳຍ່ອມຊ່ວຍພວກເຂົາໃຫ້ພົ້ນ
ແຕ່ຄົນລະເມີດຈະຖືກລາຄະຕັນຫາຂອງຕົນຈັບເປັນຊະເລີຍ

7 ເມື່ອຄົນຊົ່ວຮ້າຍຕາຍ ຄວາມຫວັງຂອງພວກເຂົາຈະຈິບຫາຍໄປ
ແລະຄວາມມຸ້ງຫວັງຂອງຄົນອະທຳກໍສູນເປົ່າ
8 ຄົນຊອບທຳຮັບການຊ່ວຍເຫລືອໃຫ້ພົ້ນຄວາມລຳບາກ
ແລະຄົນຊົ່ວຮ້າຍເຂົ້າໄປແທນທີ່
9 ຄົນໜ້າຊື່ໃຈຄົດທຳລາຍເພື່ອນບ້ານຂອງລາວດ້ວຍປາກ
ແຕ່ຄົນຍຸດຕິທຳຈະໄດ້ຮັບການຊ່ວຍໃຫ້ພົ້ນດ້ວຍອາໃສຄວາມຮູ້
10 ເມື່ອຄົນຊອບທຳຢູ່ເຢັນເປັນສຸກ ບ້ານເມືອງກໍຊື່ນຊົມຍິນດີ
ແລະເມື່ອຄົນຊົ່ວຮ້າຍຈິບຫາຍ ກໍມີສຽງໂຫ່ຮ້ອງ
11 ໂດຍພອນຂອງຄົນທ່ຽງທຳ ບ້ານເມືອງກໍເປັນທີ່ຍົກຍ້ອງ
ແຕ່ວ່າມັນລົ້ມລົງໂດຍປາກຂອງຄົນຊົ່ວຮ້າຍ
12 ບຸກຄົນທີ່ຂາດສະຕິປັນຍາຍ່ອມປະໝາດເພື່ອນບ້ານຂອງຕົນ
ແຕ່ຄົນທີ່ມີຄວາມເຂົ້າໃຈກໍຍັງເສີຍຢູ່
13 ບຸກຄົນທີ່ທຽວນິນທາກໍເຜີຍຄວາມລັບ
ແຕ່ບຸກຄົນທີ່ມີໃຈສັດຊື່ຍ່ອມປິດບັງສິ່ງໜຶ່ງສິ່ງໃດໄວ້ໄດ້
14 ບ່ອນໃດທີ່ບໍ່ມີຄຳແນະນຳ ປະຊາຊົນກໍລົ້ມລົງ
ແຕ່ໃນບ່ອນທີ່ມີທີ່ປຶກສາຫລາຍຍ່ອມມີຄວາມປອດໄພ
15 ບຸກຄົນຜູ້ຮັບປະກັນຄົນອື່ນຈະຕ້ອງທົນທຸກ
ແຕ່ຄົນທີ່ກຽດຊັງການຮັບປະກັນຍ່ອມປອດໄພ
16 ຍິງງາມສະຫງ່າຍ່ອມໄດ້ຮັບກຽດ
ແລະຊາຍທີ່ມີອຳນາດໃຫຍ່ໂຕຍ່ອມຮັ່ງມີ
17 ຊາຍຜູ້ມີຄວາມເມດຕາຍ່ອມໃຫ້ປະໂຫຍດແກ່ຈິດໃຈຂອງຕົນ
ແຕ່ຊາຍທີ່ໂຫດຮ້າຍຍ່ອມເຮັດໃຫ້ຕົວເອງເຈັບ
18 ບຸກຄົນຊົ່ວຮ້າຍໄດ້ເຮັດວຽກທີ່ຫລອກລວງ
ແຕ່ບຸກຄົນທີ່ຫວ່ານຄວາມຊອບທຳຈະໄດ້ບຳເໜັດທີ່ແນ່ນອນ
19 ຄວາມຊອບທຳນຳໄປສູ່ຊີວິດສັນໃດ
ບຸກຄົນຜູ້ຕິດຕາມຄວາມຊົ່ວຮ້າຍຈະນຳໄປສູ່ຄວາມຕາຍຂອງຕົນເອງສັນນັ້ນ
20 ຄົນທີ່ມີໃຈປະຈິບປະແຈງເປັນທີ່ໜ້າກຽດຊັງແກ່ພຣະຜູ້ເປັນເຈົ້າ
ແຕ່ຄົນທີ່ມີຄວາມທ່ຽງທຳໃນທາງຂອງຕົນເປັນທີ່ປິຕິຍິນດີຂອງພຣະອົງ
21 ເຖິງແມ່ນໃຜລົງມືຊ່ວຍກໍຕາມ ຊຶ່ງຄົນຊົ່ວຮ້າຍຈະບໍ່ມີໂທດນັ້ນກໍບໍ່ໄດ້
ແຕ່ບັນດາເຊື້ອສາຍຂອງຄົນຊອບທຳຈະໄດ້ຮັບການຊ່ວຍໃຫ້ພົ້ນ
22 ຍິງງາມທີ່ປາດສະຈາກຄວາມສະຫລຽວສະຫລາດ
ກໍເໝືອນກັບແຫວນຄຳທີ່ເກາະຢູ່ດັງໝູ
23 ຄວາມປາດຖະໜາຂອງຄົນຊອບທຳຈົບລົງໃນຄວາມດີເທົ່ານັ້ນ

ຄວາມມຸ້ງຫວັງຂອງຄົນຊົ່ວຮ້າຍຈົບລົງດ້ວຍພຣະພິໂລດ

24 ບາງຄົນຍິ່ງຈຳໜ່າຍຍິ່ງຮັ່ງມີ

ບາງຄົນຍິ່ງຍຶດສິ່ງທີ່ຄວນຈຳໜ່າຍໄວ້ຍິ່ງຂັດສົນກໍມີ

25 ບຸກຄົນທີ່ໃຈກວ້າງຂວາງຍ່ອມໄດ້ຮັບຄວາມອຸດົມຮັ່ງມີ

ບຸກຄົນທີ່ຫົດນໍ້າ ລາວເອງຈະຮັບການຫົດນໍ້າ

26 ປະຊາຊົນຈະສາບແຊ່ງບຸກຄົນທີ່ກັກເຂົ້າ

ແຕ່ພຣະພອນຈະຢູ່ເທິງຫົວຂອງຜູ້ທີ່ຂາຍເຂົ້າ

27 ບຸກຄົນທີ່ສະແຫວງຫາຄວາມດີ ກໍສະແຫວງຫາຄວາມພໍໃຈ

ແຕ່ຄວາມຊົ່ວຮ້າຍມາເຖິງຜູ້ທີ່ຊອກຫາມັນ

28 ບຸກຄົນທີ່ວາງໃຈໃນຄວາມອຸດົມຮັ່ງມີຂອງຕົນຈະລົ້ມລະລາຍ

ແຕ່ຄົນຊອບທຳຈະຮຸ່ງເຮືອງເໝືອນຢ່າງໃບໄມ້ຂຽວ

29 ຜູ້ທີ່ເຮັດໃຫ້ຄົວເຮືອນຂອງຕົນລຳບາກຈະຮັບລົມເປັນມໍລະດົກ

ແລະຄົນໂງ່ຈະເປັນຄົນໃຊ້ຂອງຄົນທີ່ມີໃຈສະຫລາດ

30 ຜົນຂອງຄົນຊອບທຳເປັນຕົ້ນໄມ້ແຫ່ງຊີວິດ

ແລະຜູ້ນຳວິນຍານກໍມີສະຕິປັນຍາ

31 ເບິ່ງແມ ແມ່ນຄົນຊອບທຳອາດຈະຖືກລົງໂທດໃນແຜ່ນດິນໂລກ

ຄົນຊົ່ວຮ້າຍ ແລະຄົນບາບຈະຍິ່ງກວ່ານັ້ນຈັກເທົ່າໃດ

# ບົດທີ 12

## ຄວາມຊອບທຳປຽບທຽບກັບຄວາມຊົ່ວຮ້າຍ

1 ຜູ້ໃດທີ່ຮັກຄຳສັ່ງສອນກໍຮັກຄວາມຮູ້

ແຕ່ບຸກຄົນທີ່ກຽດຊັງການຕັກເຕືອນກໍເປັນຄົນໂຫດຮ້າຍ

2 ຄົນດີເປັນທີ່ພໍພຣະໄທຂອງ ພຣະຜູ້ເປັນເຈົ້າ

ແຕ່ຄົນທີ່ຄິດການຊົ່ວຮ້າຍພຣະອົງຈະຊົງຕຳໜິ

3 ຄົນຈະຕັ້ງຢູ່ດ້ວຍຄວາມຊົ່ວຮ້າຍບໍ່ໄດ້

ແຕ່ຮາກຂອງຄົນຊອບທຳຈະບໍ່ຮູ້ຈັກເຄື່ອນຍ້າຍ

4 ເມຍດີເປັນມົງກຸດຂອງຜົວຂອງຕົນ

ແຕ່ນາງຜູ້ທີ່ນຳຄວາມອັບອາຍມາ ກໍເໝືອນກັບຄວາມເນົ່າເປື່ອຍໃນກະດູກຜົວ

5 ຄວາມຄິດຂອງຄົນຊອບທຳນັ້ນຍຸດຕິທຳ

ແຕ່ຄຳຫາລືຂອງຄົນຊົ່ວຮ້າຍນັ້ນຫລອກລວງ

6 ຖ້ອຍຄຳຂອງຄົນຊົ່ວຮ້າຍຄອຍຖ້າຂ້າຄົນ

ແຕ່ປາກຂອງຄົນທ່ຽງທຳຈະຊ່ວຍຄົນໃຫ້ລອດພົ້ນ

7 ຄົນຊົ່ວຮ້າຍລົ້ມແລ້ວ ແລະບໍ່ມີອີກ

ແຕ່ເຮືອນຂອງຄົນຊອບທຳຍັງດຳລົງຢູ່
8 ຄົນຈະໄດ້ຄຳຊົມເຊີຍຕາມສະຕິປັນຍາຂອງຕົນ
ແຕ່ຄົນທີ່ຄວາມຄິດປະຈົບປະແຈງຈະເປັນທີ່ໝິ່ນປະໝາດ
9 ຜູ້ທີ່ຖືກໝິ່ນປະໝາດ
ແລະມີຄົນຮັບໃຊ້ ກໍດີກວ່າຄົນທີ່ຍົກຍ້ອງຕົນເອງ ແຕ່ຂາດອາຫານ
10 ຄົນຊອບທຳຍ່ອມເຫັນແກ່ຊີວິດສັດຂອງລາວ
ແຕ່ຄວາມກະລຸນາຂອງຄົນຊົ່ວຮ້າຍຄືຄວາມໂຫດຮ້າຍ
11 ບຸກຄົນທີ່ໄຖນາຂອງຕົນຈະມີອາຫານອຸດົມ
ແຕ່ບຸກຄົນທີ່ຕິດຕາມຄົນບໍ່ມີປະໂຫຍດ ກໍຂາດຄວາມເຂົ້າໃຈ
12 ຄົນຊົ່ວຮ້າຍປາດຖະໜາຕາຂ່າຍຂອງຄົນຊົ່ວ
ແຕ່ຮາກຂອງຄົນຊອບທຳຍ່ອມອອກຜົນ
13 ຄົນຊົ່ວຮ້າຍຍ່ອມຕິດບ້ວງແຮ້ວໂດຍການລະເມີດແຫ່ງຮີມປາກຂອງຕົນ
ແຕ່ຄົນຍຸດຕິທຳຈະໜີພົ້ນຈາກຄວາມລຳບາກ
14 ຈາກຜົນແຫ່ງປາກຂອງຕົນ ຄົນກໍອີ່ມໃຈໃນຄວາມດີ
ແລະຜົນງານແຫ່ງມືຂອງລາວ ກໍຈະກັບມາຫາລາວ
15 ທາງຂອງຄົນໂງ່ນັ້ນຖືກຕ້ອງໃນສາຍຕາຂອງລາວເອງ
ແຕ່ຄົນທີ່ຍອມຟັງຄຳແນະນຳ ກໍສະຫລາດ
16 ຈະຮູ້ຄວາມຮ້າຍຂອງຄົນໂງ່ໄດ້ທັນທີ
ແຕ່ຄົນທີ່ມີປັນຍາຍ່ອມປິດບັງຄວາມອັບອາຍ
17 ຜູ້ທີ່ເວົ້າຄວາມຈິງ ກ່າວຄວາມຊອບທຳ
ແຕ່ພະຍານບໍ່ຈິງ ກ່າວຄຳຕົວະ
18 ມີບາງຄົນທີ່ຄຳເວົ້າບໍ່ຄິດຂອງລາວເປັນເໝືອນດາບແທງ
ແຕ່ລີ້ນຂອງນັກປາດນຳການຮັກສາມາໃຫ້
19 ຮີມປາກທີ່ເວົ້າຄວາມຈິງຈະທົນຢູ່ໄດ້ເປັນນິດ
ແຕ່ລີ້ນທີ່ເວົ້າຂີ້ຕົວະຢູ່ໄດ້ພຽງຊົ່ວຄາວ
20 ການຫລອກລວງຢູ່ໃນໃຈຂອງບັນດາຜູ້ທີ່ຄິດແຜນການຊົ່ວຮ້າຍ
ແຕ່ບັນດາຜູ້ທີ່ວາງແຜນງານແຫ່ງສັນຕິພາບ ກໍມີຄວາມຊື່ນບານ
21 ບໍ່ມີຄວາມຊົ່ວຕົກຢູ່ກັບຄົນຍຸດຕິທຳ
ແຕ່ຄົນຊົ່ວຮ້າຍຈະເຕັມດ້ວຍຄວາມຮ້າຍ
22 ຮີມປາກທີ່ເວົ້າຂີ້ຕົວະເປັນທີ່ໜ້າກຽດຊັງແກ່ພຣະຜູ້ເປັນເຈົ້າ
ແຕ່ບັນດາຜູ້ທີ່ປະພຶດຢ່າງຈິງໃຈເປັນທີ່ປິຕິຍິນດີແກ່ພຣະອົງ
23 ຄົນທີ່ຮອບຄອບ ຍ່ອມເກັບຄວາມຮູ້ໄວ້
ແຕ່ໃຈຄົນໂງ່ເວົ້າເຖິງຄວາມໂງ່ຈ້າ

24 ມືຂອງຄົນທີ່ຂະຫຍັນໝັ່ນພຽນຈະຄອບຄອງ
ຝ່າຍຄົນຂີ້ຄ້ານຈະຖືກບັງຄັບໃຫ້ເຮັດວຽກໜັກ
25 ຄວາມກະວົນກະວາຍໃນໃຈຂອງມະນຸດຖ່ວງດຶງລາວລົງ
ແຕ່ຖ້ອຍຄຳທີ່ດີເຮັດໃຫ້ລາວຊື່ນຊົມ
26 ຄົນຊອບທຳປະເສີດກວ່າເພື່ອນບ້ານຂອງຕົນ
ແຕ່ທາງຂອງຄົນຊົ່ວຮ້າຍເກືອບຈູງພວກເຂົາໃຫ້ຫລົງ
27 ຄົນຂີ້ຄ້ານຈະບໍ່ປີ້ງເຫຍື່ອທີ່ລາວລ່າມາ
ແຕ່ຊັບສົມບັດຂອງຄົນຂະຫຍັນໝັ່ນພຽນກໍມີຄ່າ
28 ໃນວິຖີທາງຂອງຄວາມຊອບທຳ ກໍມີຊີວິດ
ແລະໃນທາງນັ້ນບໍ່ມີຄວາມຕາຍ

# ບົດທີ 13

## ລູກຊາຍທີ່ສະຫລາດ ຄືພຣະພອນແຫ່ງຄວາມຊອບທຳ

1 ລູກຊາຍທີ່ສະຫລາດຟັງຄຳສັ່ງສອນພໍ່ຂອງຕົນ
ແຕ່ຄົນມັກເຍາະເຍີ້ຍ ບໍ່ຟັງຄຳຕຳໜິ
2 ຄົນຈະກິນຂອງດີຈາກຜົນປາກຂອງຕົນ
ແຕ່ຈິດໃຈຂອງຄົນລະເມີດຈະກິນຄວາມທາລຸນ
3 ບຸກຄົນທີ່ຄຸ້ມຄອງປາກຂອງຕົນຈະຮັກສາຊີວິດໄວ້ໄດ້
ແຕ່ບຸກຄົນທີ່ເປີດຮີມປາກກວ້າງ ກໍຈະມາເຖິງຄວາມຈິບຫາຍ
4 ວິນຍານຂອງຄົນຂີ້ຄ້ານຍັງຢາກຢູ່ ແຕ່ບໍ່ໄດ້ຫຍັງເລີຍ
ຝ່າຍວິນຍານຂອງຄົນຂະຫຍັນໝັ່ນພຽນຈະອ້ວນພີ
5 ຄົນຊອບທຳກຽດຊັງຄວາມບໍ່ຈິງ
ແຕ່ຄົນຊົ່ວຮ້າຍປະພຶດໜ້າລັງກຽດ ແລະອັບອາຍຂາຍໜ້າ
6 ຄວາມຊອບທຳຄຸ້ມຄອງຜູ້ທີ່ທາງຂອງຕົນທ່ຽງທຳ
ແຕ່ຄວາມຊົ່ວຮ້າຍລົ້ມຄົນບາບ
7 ຄົນທີ່ວ່າຕົນຮັ່ງມີ ແຕ່ບໍ່ມີຫຍັງເລີຍກໍມີ
ຄົນທີ່ວ່າຕົນເປັນຄົນຈົນ ແຕ່ມີຊັບສົມບັດເປັນຈຳນວນຫລາຍກໍມີຢູ່
8 ຄ່າໄຖ່ຊີວິດຂອງຄົນຄືຊັບສົມບັດຂອງລາວ
ແຕ່ຄົນຍາກຈົນບໍ່ຟັງຄຳຕຳໜິ
9 ແສງສະຫວ່າງຂອງຄົນຊອບທຳກໍສ່ອງແສງ
ແຕ່ຕະກຽງຂອງຄົນຊົ່ວຮ້າຍຈະຖືກດັບ
10 ເພາະຄວາມອວດຕົວເທົ່ານັ້ນ ການຜິດກັນຈຶ່ງເກີດຂຶ້ນ
ແຕ່ປັນຍາຢູ່ກັບບັນດາຜູ້ທີ່ຮັບຄຳແນະນຳ

11 ຊັບສົມບັດທີ່ໄດ້ມາ ໂດຍວິທີງ່າຍໆ ຈະສູນເສຍລົງ
ແຕ່ບຸກຄົນທີ່ຮວບຮວມ ໂດຍການງານຈະໄດ້ເພີ່ມພູນຂຶ້ນ
12 ຄວາມຫວັງທີ່ຖືກຖ່ວງໄວ້ເຮັດໃຫ້ໃຈເຈັບຊໍ້າ
ແຕ່ຄວາມປາດຖະໜາທີ່ສຳເລັດແລ້ວກໍເປັນຕົ້ນໄມ້ແຫ່ງຊີວິດ
13 ບຸກຄົນຜູ້ໝິ່ນປະໝາດພຣະທຳຈະຖືກທຳລາຍ
ແຕ່ບຸກຄົນຜູ້ຢຳເກງພຣະບັນຍັດຈະໄດ້ຮັບບຳເໜັດ
14 ຄຳສອນຂອງນັກປາດເປັນນໍ້າພຸແຫ່ງຊີວິດ
ເພື່ອໃຫ້ຫລີກຈາກບ້ວງແຮ້ວຂອງຄວາມຕາຍ
15 ຄວາມເຂົ້າໃຈທີ່ດີກໍໄດ້ຮັບຄວາມຍິນດີ
ແຕ່ຫົນທາງຂອງຄົນລະເມີດກໍຍາກລຳບາກຫລາຍ
16 ບັນດາຄົນທີ່ຮອບຄອບເຮັດທຸກຢ່າງດ້ວຍຄວາມຮູ້
ແຕ່ຄົນໂງ່ກໍອວດຄວາມໂງ່ຂອງຕົນ
17 ຜູ້ສົ່ງຂ່າວທີ່ຊົ່ວຮ້າຍຫລົງໄປໃນຄວາມຮ້າຍ
ແຕ່ຜູ້ສົ່ງຂ່າວທີ່ສັດຊື່ນຳການຮັກສາມາໃຫ້
18 ຄວາມຍາກຈົນ ແລະຄວາມອັບອາຍມາເຖິງບຸກຄົນທີ່ເມີນເສີຍຕໍ່ຄຳສັ່ງສອນ
ແຕ່ບຸກຄົນທີ່ສົນໃຈຄຳຕັກເຕືອນກໍໄດ້ຮັບກຽດ
19 ຄວາມປາດຖະໜາທີ່ສຳເລັດເປັນຂອງຫວານສຳລັບຈິດວິນຍານ
ແຕ່ການຫລີກໜີຈາກຄວາມຊົ່ວຮ້າຍກໍເປັນສິ່ງໜ້າກຽດຊັງແກ່ຄົນໂງ່
20 ບຸກຄົນທີ່ຍ່າງກັບນັກປາດຈະກາຍເປັນຄົນສະຫລາດ
ແຕ່ເພື່ອນຝູງຂອງຄົນໂງ່ຈະຖືກທຳລາຍ
21 ຄວາມຊົ່ວຮ້າຍຕິດຕາມຄົນບາບ
ແຕ່ຄົນຊອບທຳຈະໄດ້ຮັບຄວາມດີເປັນບຳເໜັດ
22 ຄົນດີກໍປະມໍລະດົກໄວ້ໃຫ້ແກ່ລູກຫລານ
ແຕ່ຊັບສົມບັດຂອງຄົນບາບນັ້ນຮວບຮວມໄວ້ໃຫ້ຄົນຊອບທຳ
23 ດິນທີ່ຄົນຍາກຈົນໄຖໄວ້ກໍເກີດຜົນອຸດົມ
ແຕ່ສິ່ງຂອງຖືກທຳລາຍໄດ້ ເພາະຂາດຄວາມຍຸດຕິທຳ
24 ບຸກຄົນທີ່ສະຫງວນໄມ້ແສ້ ກໍກຽດຊັງລູກຊາຍຂອງຕົນ
ແຕ່ຜູ້ທີ່ຮັກລາວ ພະຍາຍາມຕີສອນລາວທັນທີ
25 ຄົນຊອບທຳຮັບປະທານໄດ້ຈົນພໍໃຈ
ແຕ່ທ້ອງຂອງຄົນຊົ່ວຮ້າຍຈະຫິວ

# ບົດທີ 14

## ຄົນສະຫລາດປຽບທຽບກັບຄົນໂງ່ ຄົນຮັ່ງມີປຽບທຽບກັບຄົນຍາກຈົນ

1 ຜູ້ຍິງທັງຫລາຍທີ່ມີສະຕິປັນຍາສ້າງເຮືອນຂອງນາງຂຶ້ນ
ແຕ່ຜູ້ຍິງທີ່ໂງ່ຮື້ມັນລົງດ້ວຍມືຕົນເອງ
2 ບຸກຄົນຜູ້ດຳເນີນໃນຄວາມທ່ຽງທຳກໍຢຳເກງພຣະຜູ້ເປັນເຈົ້າ
ແຕ່ບຸກຄົນທີ່ຄົດໂກງໃນທາງຂອງລາວກໍໝິ່ນປະໝາດພຣະອົງ
3 ໃນປາກຂອງຄົນໂງ່ມີໄມ້ແສ້ແຫ່ງຄວາມຈອງຫອງ
ແຕ່ຮີມປາກຂອງນັກປາດຈະຮັກສາພວກເຂົາໄວ້
4 ບ່ອນໃດທີ່ບໍ່ມີງົວເຖິກ ບ່ອນນັ້ນຮາງຫຍ້າສະອາດ
ແຕ່ພືດຜົນອຸດົມ ໄດ້ມາດ້ວຍແຮງງົວ
5 ພະຍານທີ່ສັດຊື່ຈະບໍ່ຂີ້ຕົວະ
ແຕ່ພະຍານບໍ່ຈິງຈະກ່າວຄຳຂີ້ຕົວະ
6 ຄົນມັກເຍາະເຍີ້ຍສະແຫວງຫາປັນຍາບໍ່ພົບ
ແຕ່ຄວາມຮູ້ນັ້ນກໍງ່າຍແກ່ຄົນທີ່ມີຄວາມເຂົ້າໃຈ
7 ຈົ່ງໄປໃຫ້ພົ້ນໜ້າຄົນໂງ່
ເມື່ອເຈົ້າບໍ່ພົບຮີມປາກແຫ່ງຄວາມຮູ້ໃນຕົວລາວ
8 ປັນຍາຂອງຄົນຮອບຄອບຄືການເຂົ້າໃຈທາງຂອງຕົນ
ແຕ່ຄວາມໂງ່ຂອງຄົນບໍ່ມີປັນຍາກໍເປັນທີ່ຫລອກລວງ
9 ຄົນໂງ່ຈ້າເຍາະເຍີ້ຍເລື່ອງຄວາມຜິດບາບ
ແຕ່ໃນທ່າມກາງຄົນຊອບທຳ ກໍມີຄວາມຍິນດີ
10 ຈິດໃຈຮູ້ຄວາມຂົມຂື່ນຂອງໃຈເອງ
ແລະບໍ່ມີໃຜມາເຂົ້າສ່ວນໃນຄວາມຊື່ນບານຂອງມັນ
11 ເຮືອນຂອງຄົນຊົ່ວຮ້າຍຈະຖືກລົ້ມ
ແຕ່ເຕັນຂອງຄົນທ່ຽງທຳຈະຮຸ່ງເຮືອງ
12 ມີທາງໜຶ່ງຊຶ່ງຄົນເຮົາເບິ່ງວ່າຖືກຕ້ອງ
ແຕ່ມັນສິ້ນສຸດລົງທີ່ທາງຂອງຄວາມຕາຍ
13 ເຖິງແມ່ນໃຈຂອງຄົນທີ່ຍິ້ມຫົວກໍໂສກເສົ້າ
ແລະທີ່ສຸດຂອງຄວາມຊື່ນບານນັ້ນ ຄືຄວາມທຸກໂສກ
14 ຄົນທີ່ມີໃຈຖອຍຫລັງກັບຈະໄດ້ຜົນຈາກທາງຂອງລາວຈົນເຕັມ
ແລະຄົນດີກໍຈະໄດ້ຜົນດີແຫ່ງການກະທຳຂອງລາວ
15 ຄົນໂງ່ເຊື່ອຖືຄຳເວົ້າທຸກຢ່າງ
ແຕ່ຄົນຮອບຮູ້ເບິ່ງວ່າຕົນກຳລັງໄປທາງໃດ
16 ຄົນມີປັນຍາກໍຢຳເກງ ແລະຫລີກໜີຈາກຄວາມຊົ່ວຮ້າຍ

ແຕ່ຄົນໂງ່ດ່າວ່າດ້ວຍຄວາມໝັ້ນໃຈ
17 ຄົນຮ້າຍງ່າຍປະພຶດໂງ່ຈ້າ
ແລະຄົນວາງແຜນຊົ່ວຮ້າຍກໍເປັນທີ່ກຽດຊັງ
18 ຄົນໂງ່ໄດ້ຄວາມໂງ່ເປັນມໍລະດົກ
ແຕ່ຄົນຮອບຮູ້ກໍມີຄວາມຮູ້ເປັນມົງກຸດ
19 ຄົນຊົ່ວຮ້າຍຂາບຄົນດີ
ແລະຄົນຊົ່ວຮ້າຍຂາບຢູ່ທີ່ປະຕູເມືອງຂອງຄົນຊອບທຳ
20 ຄົນຍາກຈົນນັ້ນ ແມ່ນເພື່ອນບ້ານຂອງຕົນກໍກຽດຊັງ
ແຕ່ຄົນຮັ່ງມີ ມີສະຫາຍຫລວງຫລາຍ
21 ຄົນທີ່ໝິ່ນປະໝາດເພື່ອນບ້ານຂອງຕົນກໍເຮັດບາບ
ແຕ່ບຸກຄົນທີ່ເມດຕາຄົນຍາກຈົນ ກໍເປັນສຸກ
22 ຄົນທີ່ຄິດການຊົ່ວນັ້ນບໍ່ຜິດບໍ
ບັນດາຜູ້ທີ່ຄິດການດີກໍຈະພົບຄວາມເມດຕາ ແລະຄວາມຈິງ
23 ມີກຳໄລຢູ່ໃນງານທຸກຢ່າງ ພຽງແຕ່ຄຳເວົ້າແຫ່ງຮີມປາກນັ້ນ
ໂນ້ມໄປທາງຄວາມຂາດແຄນ
24 ມົງກຸດຂອງນັກປາດ ຄືຄວາມອຸດົມຮັ່ງມີຂອງຕົນ
ແຕ່ຄວາມໂງ່ຂອງຄົນບໍ່ມີປັນຍາ ຄືຄວາມໂງ່ຈ້າ
25 ພະຍານສັດຊື່ຈະຊ່ວຍຊີວິດໃຫ້ລອດພົ້ນ
ແຕ່ພະຍານບໍ່ຈິງຈະກ່າວຄຳຂີ້ຕົວະ
26 ຄວາມຢຳເກງພຣະຜູ້ເປັນເຈົ້າເຮັດໃຫ້ຄົນຢູ່ຢ່າງໝັ້ນໃຈຫລາຍ
ລູກຫລານຂອງລາວຈະມີທີ່ເພິ່ງ
27 ຄວາມຢຳເກງພຣະຜູ້ເປັນເຈົ້າເປັນນໍ້າພຸແຫ່ງຊີວິດ
ເພື່ອຜູ້ໜຶ່ງຜູ້ໃດຈະຫລີກຈາກບ້ວງແຮ້ວຂອງຄວາມຕາຍໄດ້
28 ໃນປະຊາຊົນ ກໍມີກຽດຂອງກະສັດ
ແຕ່ບໍ່ມີປະຊາຊົນ ເຈົ້ານາຍ ກໍຖືກທຳລາຍ
29 ບຸກຄົນທີ່ຮ້າຍຊ້າ ກໍມີຄວາມເຂົ້າໃຈຫລາຍ
ແຕ່ບຸກຄົນທີ່ໃຈຮ້າຍໄວກໍຍົກຍ້ອງຄວາມໂງ່
30 ໃຈທີ່ສະຫງົບໃຫ້ຊີວິດແກ່ເນື້ອໜັງ
ແຕ່ຄວາມອິດສາເຮັດໃຫ້ກະດູກຜ່ອຍ
31 ຜູ້ບີບບັງຄັບຄົນຍາກຈົນ ໝິ່ນປະໝາດພຣະຜູ້ສ້າງຂອງລາວ
ແຕ່ບຸກຄົນທີ່ຖວາຍກຽດແກ່ພຣະອົງ ກໍເມດຕາຕໍ່ຄົນຂັດສົນ
32 ຄົນຊົ່ວຮ້າຍ ກໍຖືກໄລ່ອອກຕາມການເຮັດຊົ່ວຮ້າຍຂອງລາວ
ແຕ່ຄົນຊອບທຳມີຄວາມຫວັງໃນຄວາມຕາຍຂອງລາວ

33 ປັນຍາອາໄສຢູ່ໃນໃຈຂອງຄົນທີ່ມີຄວາມເຂົ້າໃຈ
ແຕ່ສິ່ງທີ່ຢູ່ທ່າມກາງບັນດາຄົນໂງ່ ກໍປາກົດຕົວ
34 ຄວາມຊອບທຳເຊີດຊູປະຊາຊາດໜຶ່ງ
ແຕ່ບາບເປັນເຫດໃຫ້ຊົນຊາດໜຶ່ງ ຖືກຕຳໜິ
35 ຂ້າລາຊະການທີ່ສະຫລຽວສະຫລາດກໍໄດ້ຮັບຄວາມຍິນດີຈາກກະສັດ
ແຕ່ພະພິໂລດຂອງພະອົງ ກໍຕົກລົງເທິງຜູ້ທີ່ປະພຶດໜ້າລະອາຍ

# ບົດທີ 15

## ຄວາມດີປຽບທຽບກັບຄວາມຊົ່ວຮ້າຍ

1 ຄຳຕອບອ່ອນຫວານເຮັດໃຫ້ຄວາມຮ້າຍຖອຍຫ່າງອອກໄປ
ແຕ່ຄຳຍົວະເຮັດໃຫ້ຄວາມໃຈຮ້າຍເກີດຂຶ້ນ
2 ລີ້ນຂອງນັກປາດໃຊ້ຄວາມຮູ້ຢ່າງຖືກຕ້ອງ
ແຕ່ປາກຂອງຄົນໂງ່ ຖອກຄວາມໂງ່ອອກມາ
3 ພຣະເນດຂອງພຣະຜູ້ເປັນເຈົ້າຢູ່ໃນທຸກແຫ່ງຫົນ
ຊົງເຝົ້າເບິ່ງຄົນຊົ່ວ ແລະຄົນດີ
4 ລີ້ນທີ່ສຸພາບເປັນຕົ້ນໄມ້ແຫ່ງຊີວິດ
ແຕ່ລີ້ນທີ່ປະຈົບປະແຈງເຮັດໃຫ້ນ້ຳໃຈແຕກສະຫລາຍ
5 ຄົນໂງ່ໝິ່ນປະໝາດຄຳສັ່ງສອນພໍ່ຂອງຕົນ
ແຕ່ຜູ້ທີ່ສົນໃຈຄຳຕັກເຕືອນ ກໍເປັນຜູ້ຮອບຮູ້
6 ໃນເຮືອນຂອງຄົນຊອບທຳມີຄັງຊັບຫລາຍ
ແຕ່ຄວາມລຳບາກຕົກຢູ່ກັບລາຍໄດ້ຂອງຄົນຊົ່ວຮ້າຍ
7 ຮີມປາກຂອງນັກປາດກະຈາຍຄວາມຮູ້
ແຕ່ຄວາມຄິດຂອງຄົນໂງ່ບໍ່ເປັນເຊັ່ນນັ້ນ
8 ເຄື່ອງຖວາຍບູຊາຂອງຄົນຊົ່ວຮ້າຍເປັນທີ່ໜ້າກຽດຊັງແກ່ພຣະຜູ້ເປັນເຈົ້າ
ແຕ່ຄຳອະທິຖານຂອງຄົນທ່ຽງທຳເປັນທີ່ປິຕິຍິນດີແກ່ພຣະອົງ
9 ທາງຂອງຄົນຊົ່ວຮ້າຍເປັນທີ່ໜ້າກຽດຊັງແກ່ພຣະຜູ້ເປັນເຈົ້າ
ແຕ່ພຣະອົງຊົງຮັກຜູ້ທີ່ຕິດຕາມຄວາມຊອບທຳ
10 ຜູ້ທີ່ປະຖິ້ມທາງດີ ກໍຖືວ່າການລົງໂທດເປັນສິ່ງທີ່ໜັກໃຈ
ຜູ້ທີ່ກຽດຊັງຄຳເຕືອນສະຕິຈະຕາຍ
11 ນາລົກ ແລະແດນຄົນຕາຍກໍປະກົດແຈ້ງຢູ່ສະເພາະພຣະພັກພຣະຜູ້ເປັນເຈົ້າ
ໃຈແຫ່ງບຸດທັງຫລາຍຂອງມະນຸດຈະແຈ້ງສະເພາະພຣະອົງຍິ່ງກວ່ານັ້ນຈັກເທົ່າໃດ
12 ຄົນມັກເຍາະເຍີ້ຍບໍ່ຮັກຄົນທີ່ຕັກເຕືອນຕົນ
ທັງຈະບໍ່ໄປຫານັກປາດ

13 ໃຈທີ່ຍິນດີເຮັດໃຫ້ໃບໜ້າຊື່ນບານ
ແຕ່ໂດຍຄວາມເສຍໃຈ ຈິດວິນຍານກໍມົວໝອງລົງ
14 ໃຈຂອງຜູ້ທີ່ມີຄວາມເຂົ້າໃຈ ກໍສະແຫວງຫາຄວາມຮູ້
ແຕ່ປາກຂອງຄົນໂງ່ກິນຄວາມໂງ່ເປັນອາຫານ
15 ທຸກໆວັນຂອງຄົນທີ່ທຸກໃຈ ກໍຮ້າຍ
ແຕ່ຄົນທີ່ມີໃຈຊື່ນບານມີການກິນລ້ຽງຕໍ່ເນື່ອງກັນ
16 ມີຊັບນ້ອຍ ແຕ່ມີຄວາມຢຳເກງພຣະຜູ້ເປັນເຈົ້າ
ດີກວ່າມີຄັງຊັບໃຫຍ່ ແຕ່ມີຄວາມລຳບາກຢູ່ດ້ວຍ
17 ກິນຜັກເປັນອາຫານໃນບ່ອນທີ່ມີຄວາມຮັກ
ກໍດີກວ່າກິນຊີ້ນງົວພ້ອມກັບຄວາມກຽດຊັງຢູ່ດ້ວຍ
18 ຄົນໃຈຮ້ອນກໍ່ການຜິດຖຽງກັນ
ແຕ່ຜູ້ທີ່ຮ້າຍຊ້າ ກໍລະງັບການຕໍ່ສູ້ກັນ
19 ທາງຂອງຄົນຂີ້ຄ້ານເປັນເໝືອນກັບຮົ້ວໜາມ
ແຕ່ການດຳເນີນຊີວິດຂອງຄົນຊອບທຳເປັນທາງຫລວງຮາບພຽງສະເໝີ
20 ລູກຊາຍທີ່ສະຫລາດເຮັດໃຫ້ພໍ່ຍິນດີ
ແຕ່ຄົນໂງ່ໝິ່ນປະໝາດແມ່ຂອງຕົນ
21 ຄວາມໂງ່ເປັນຄວາມຊື່ນບານແກ່ບຸກຄົນຜູ້ບໍ່ມີສະຕິປັນຍາ
ແຕ່ຄົນທີ່ມີຄວາມເຂົ້າໃຈ ຈະດຳເນີນໃນຄວາມທ່ຽງທຳ
22 ປາດສະຈາກການປຶກສາຫາລື ແຜນງານກໍລົ້ມເຫລວ
ແຕ່ມີຜູ້ແນະນຳຫລາຍໆແຜນງານນັ້ນກໍສຳເລັດ
23 ຄຳຕອບຈາກປາກທີ່ເໝາະສົມກໍເປັນຄວາມຊື່ນບານແກ່ຄົນ
ຄຳດຽວທີ່ຖືກເວລາກໍດີແທ້ໆ
24 ທາງແຫ່ງຊີວິດນຳຄົນສະຫລາດຂຶ້ນໄປສູ່ເບື້ອງເທິງ
ເພື່ອລາວຈະໄດ້ຫລີກໜີຈາກນາລົກເບື້ອງລຸ່ມ
25 ພຣະຜູ້ເປັນເຈົ້າຈະຊົງຮື້ເຮືອນຂອງຄົນຈອງຫອງ
ແຕ່ໃຫ້ຂອບເຂດຂອງແມ່ໝ້າຍຄົງຢູ່
26 ຄວາມຄິດຂອງຄົນຊົ່ວຮ້າຍເປັນສິ່ງທີ່ໜ້າກຽດຊັງແກ່ພຣະຜູ້ເປັນເຈົ້າ
ແຕ່ຖ້ອຍຄຳຂອງຄົນບໍລິສຸດເປັນຖ້ອຍຄຳທີ່ພໍພຣະໄທ
27 ບຸກຄົນຜູ້ຊອກຫາກຳໄລກໍສ້າງຄວາມລຳບາກແກ່ຄົວເຮືອນຂອງຕົນ
ແຕ່ບຸກຄົນຜູ້ກຽດຊັງສິນບົນຈະມີຊີວິດຢູ່
28 ໃຈຂອງຄົນຊອບທຳຄຳນຶງວ່າຈະຕອບຢ່າງໃດ
ແຕ່ປາກຂອງຄົນຊົ່ວຮ້າຍຖອກສິ່ງຊົ່ວຮ້າຍອອກ
29 ພຣະຜູ້ເປັນເຈົ້າຊົງຢູ່ຫ່າງໄກຈາກຄົນຊົ່ວຮ້າຍ

ແຕ່ພຣະອົງຊົງຮັບຟັງຄຳອະທິຖານຂອງຄົນຊອບທຳ
30 ແສງສະຫວ່າງຂອງຕາເຮັດໃຫ້ໃຈຊື່ນບານ
ແລະຂ່າວດີເຮັດໃຫ້ກະດູກສົດຊື່ນ
31 ຫູທີ່ຟັງຄຳຕັກເຕືອນທີ່ໃຫ້ຊີວິດ
ຈະຢູ່ທ່າມກາງນັກປາດ
32 ຜູ້ທີ່ເມີນເສີຍຕໍ່ຄຳສັ່ງສອນກໍໝິ່ນປະໝາດຈິດໃຈຕົນເອງ
ແຕ່ຜູ້ທີ່ຟັງຄຳຕັກເຕືອນກໍໄດ້ຄວາມເຂົ້າໃຈ
33 ຄວາມຢຳເກງ ພຣະຜູ້ເປັນເຈົ້າ ເປັນການສອນໃຫ້ເກີດປັນຍາ
ແລະຄວາມຖ່ອມໃຈຍ່າງຢູ່ຕໍ່ໜ້າກຽດສັກສີ

# ບົດທີ 16

## ຄວາມດີປຽບທຽບກັບຄວາມຊົ່ວຮ້າຍ

1 ທັງແຜນງານຂອງຈິດໃຈມະນຸດ
ແລະຄຳຕອບຂອງລີ້ນ ມາຈາກ ພຣະຜູ້ເປັນເຈົ້າ
2 ທາງທັງໝົດຂອງມະນຸດ ກໍບໍລິສຸດໃນສາຍຕາຂອງລາວ
ແຕ່ ພຣະຜູ້ເປັນເຈົ້າ ຊົງຊັ່ງເບິ່ງຈິດໃຈ
3 ຈົ່ງມອບງານຂອງເຈົ້າໄວ້ກັບ ພຣະຜູ້ເປັນເຈົ້າ
ແລະແຜນງານຂອງເຈົ້າຈະໄດ້ຮັບການສະຖາປະນາ
4 ພຣະຜູ້ເປັນເຈົ້າ ຊົງສ້າງທຸກສິ່ງໄວ້ ເພື່ອພຣະອົງເອງ
ແມ່ນຄົນຊົ່ວຮ້າຍ ກໍເພື່ອວັນຊົ່ວຮ້າຍ
5 ທຸກຄົນທີ່ມີໃຈຈອງຫອງ ກໍເປັນທີ່ກຽດຊັງແກ່ ພຣະຜູ້ເປັນເຈົ້າ
ເຖິງແມ່ນໃຜລົງມືຊ່ວຍກໍຕາມ ພວກເຂົາຈະພົ້ນໂທດກໍບໍ່ໄດ້
6 ຄວາມເມດຕາ ແລະຄວາມຈິງໄດ້ລຶບຄວາມຊົ່ວຊ້າ
ແລະຄົນຫລີກຄວາມຊົ່ວຮ້າຍໄດ້ໂດຍຄວາມຢຳເກງ ພຣະຜູ້ເປັນເຈົ້າ
7 ເມື່ອທາງຂອງມະນຸດເປັນທີ່ພໍພຣະໄທແກ່ ພຣະຜູ້ເປັນເຈົ້າ
ແມ່ນສັດຕູຂອງລາວນັ້ນ ພຣະອົງກໍຊົງເຮັດໃຫ້ຄືນດີກັບລາວໄດ້
8 ມີໜ້ອຍ ແຕ່ມີຄວາມຊອບທຳ
ກໍດີກວ່າມີລາຍໄດ້ຫລາຍດ້ວຍຄວາມບໍ່ຍຸດຕິທຳ
9 ໃຈຂອງມະນຸດວາງແຜນງານຂອງລາວ
ແຕ່ ພຣະຜູ້ເປັນເຈົ້າ ຊົງນຳທາງເດີນຂອງລາວ
10 ຄຳຕັດສິນອັນມາຈາກ ພຣະເຈົ້າ ຢູ່ທີ່ຮີມພະໂອດຂອງກະສັດ
ພະໂອດຂອງພະອົງບໍ່ລະເມີດໃນການພິພາກສາ
11 ຕາຊິງ ແລະຕາຊັ່ງທ່ຽງທຳເປັນຂອງ ພຣະຜູ້ເປັນເຈົ້າ

ໝາກໂຕ້ນທັງໝົດໃນຖົງເປັນພຣະລາຊະກິດຂອງພຣະອົງ
12 ການເຮັດຄວາມຊົ່ວຮ້າຍເປັນທີ່ໜ້າກຽດຊັງຕໍ່ກະສັດ
ເພາະວ່າພະທີ່ນັ່ງນັ້ນ ຖືກສະຖາປະນາໄວ້ດ້ວຍຄວາມຊອບທຳ
13 ຮີມປາກທີ່ຊອບທຳເປັນທີ່ປິຕິຍິນດີແກ່ກະສັດ
ແລະພະອົງຊົງຮັກຜູ້ທີ່ເວົ້າສິ່ງທີ່ຖືກຕ້ອງ
14 ພະພິໂລດຂອງກະສັດເປັນຜູ້ສົ່ງຂ່າວຂອງຄວາມຕາຍ
ແຕ່ນັກປາດຈະລະງັບໄດ້
15 ໃນແສງສະຫວ່າງແຫ່ງພະພັກຂອງກະສັດມີຊີວິດ
ແລະໃນຄວາມພໍພະໄທຂອງພະອົງ ກໍເປັນເໝືອນດັ່ງເມກທີ່ນຳຝົນພັກປາຍລະດູມາ
16 ໄດ້ປັນຍາ ກໍດີກວ່າໄດ້ທອງຄຳຈັກເທົ່າໃດ
ທີ່ຈະໄດ້ຄວາມເຂົ້າໃຈ ກໍດີກວ່າເລືອກເອົາເງິນ
17 ທາງຫລວງຂອງຄົນທ່ຽງທຳຫັນອອກຈາກຄວາມຊົ່ວຮ້າຍ
ຜູ້ທີ່ຄຸ້ມຄອງທາງຂອງຕົນກໍຮັກສາຊີວິດຂອງລາວໄວ້
18 ຄວາມຈອງຫອງຍ່າງນຳໜ້າການຖືກທຳລາຍ
ແລະຈິດໃຈທີ່ຍິ່ງຈອງຫອງນຳໜ້າການລົ້ມລົງ
19 ການຈະເປັນຄົນທີ່ມີໃຈຖ່ອມ ຢູ່ກັບຄົນຍາກຈົນ
ກໍດີກວ່າແບ່ງຂອງຍຶດມາໄດ້ກັບຄົນຈອງຫອງ
20 ຜູ້ຈັດການທຸລະກິດຢ່າງສະຫລຽວສະຫລາດຈະພົບຂອງດີ
ແລະຄົນທີ່ວາງໃຈໃນ **ພຣະຜູ້ເປັນເຈົ້າ** ຈະເປັນສຸກ
21 ຄົນໃຈສະຫລາດເອີ້ນວ່າ ເປັນຄົນມີຄວາມຮອບຄອບ
ແລະຄວາມຫວານແຫ່ງຮີມປາກເພີ່ມການຮຽນຮູ້
22 ຄວາມເຂົ້າໃຈເປັນນໍ້າພຸແຫ່ງຊີວິດແກ່ຜູ້ທີ່ມີຄວາມເຂົ້າໃຈ
ແຕ່ຄຳສັ່ງສອນຂອງຄົນໂງ່ເປັນຄວາມໂງ່ຈ້າ
23 ໃຈຂອງນັກປາດເຮັດໃຫ້ປາກຂອງຕົນສຸຂຸມ
ແລະເພີ່ມການຮຽນຮູ້ແກ່ຮີມປາກຂອງລາວ
24 ຖ້ອຍຄຳຊົມຊື່ນເໝືອນກັບຮັງເຜິ້ງ
ເປັນຄວາມຫວານແກ່ຈິດວິນຍານ ແລະເປັນອະນາໄມແກ່ກະດູກ
25 ມີທາງໜຶ່ງ ຊຶ່ງຄົນເຮົາເບິ່ງຄືກັບວ່າຖືກຕ້ອງ
ແຕ່ມັນສິ້ນສຸດລົງທີ່ທາງຂອງຄວາມຕາຍ
26 ຄົນທີ່ເຮັດວຽກກໍເຮັດວຽກເພື່ອຕົນເອງ
ເພາະປາກຂອງລາວໄດ້ກະຕຸ້ນລາວໄປ
27 ຄົນອະທຳຂຸດຄົ້ນຄວາມຊົ່ວ
ແລະໃນຮີມປາກຂອງລາວເປັນເໝືອນກັບໄຟລວກ

28 ຄົນປະຈົບປະແຈງແພ່ການຜິດຖຽງກັນ
ແລະຜູ້ທີ່ມັກນິນທາ ກໍແຍກເພື່ອນສະນິດອອກຈາກກັນ
29 ຄົນທາລຸນລໍ້ລວງເພື່ອນບ້ານຂອງລາວ
ແລະໄດ້ນຳໄປໃນທາງທີ່ບໍ່ດີ
30 ລາວຂະຫຍິບຕາວາງແຜນງານປະຈົບປະແຈງ
ລາວເມັ້ມຮີມປາກຂອງລາວ ນຳຄວາມຊົ່ວຮ້າຍໃຫ້ເກີດຂຶ້ນ
31 ຫົວທີ່ມີຜົມຫງອກເປັນມົງກຸດແຫ່ງສະຫງ່າລາສີ
ຖ້າພົບໃນທາງແຫ່ງຄວາມຊອບທຳ
32 ຜູ້ທີ່ຮ້າຍຊ້າ ກໍດີກວ່າຄົນທີ່ມີກຳລັງຫລາຍ
ແລະຜູ້ທີ່ປົກຄອງຈິດໃຈຂອງຕົນເອງ ກໍດີກວ່າຜູ້ທີ່ຕີເມືອງໄດ້
33 ສະຫລາກນັ້ນ ລາວວາງລົງເທິງຕັກ
ແຕ່ການຕັດສິນມາຈາກພຣະຜູ້ເປັນເຈົ້າທັງໝົດ

# ບົດທີ 17

## ຄຳສັ່ງສອນເລື່ອງຄວາມດີກັບຄວາມຊົ່ວຮ້າຍ

1 ອາຫານແຫ້ງໜ້ອຍໜຶ່ງ ພ້ອມກັບຄວາມສະຫງົບ
ດີກວ່າເຮືອນທີ່ມີເຄື່ອງຖວາຍບູຊາເຕັມ ພ້ອມກັບການຜິດຖຽງກັນ
2 ຂ້າທາດທີ່ສະຫລຽວສະຫລາດຈະປົກຄອງລູກຊາຍຜູ້ປະພຶດຄວາມອັບອາຍ
ແລະຈະໄດ້ສ່ວນແບ່ງມໍລະດົກເທົ່າກັບພວກພີ່ນ້ອງ
3 ກະປຸກມີໄວ້ສຳລັບເງິນ ແລະເຕົາຫລອມໂລຫະມີໄວ້ສຳລັບທອງຄຳ
ແລະພຣະຜູ້ເປັນເຈົ້າຊົງທົດລອງໃຈ
4 ຜູ້ເຮັດຄວາມຊົ່ວຟັງຄຳເວົ້າບໍ່ຈິງ
ແລະຄົນຂີ້ຕົວະຫງ່ຽງຫູໃຫ້ລີ້ນທີ່ບໍ່ໄວ້ວາງໃຈ
5 ບຸກຄົນທີ່ຫຍໍ້ຫຍັນຄົນຍາກຈົນ ກໍໝິ່ນປະໝາດພຣະຜູ້ສ້າງຂອງລາວ
ບຸກຄົນທີ່ຍິນດີເມື່ອມີຄວາມຍາກລຳບາກຈະບໍ່ມີໂທດ ກໍເປັນໄປບໍ່ໄດ້
6 ລູກຫລານເປັນມົງກຸດຂອງຄົນເຖົ້າ
ແລະສະຫງ່າລາສີຂອງບຸດຄືພໍ່ຂອງລາວ
7 ຄຳເວົ້າທີ່ດີເລີດ ບໍ່ເໝາະແກ່ຄົນໂງ່ສັນໃດ
ຮີມປາກທີ່ຂີ້ຕົວະຍິ່ງບໍ່ເໝາະແກ່ເຈົ້ານາຍສັນນັ້ນ
8 ສິນບົນເປັນເໝືອນເພັດພອຍໃນສາຍຕາຂອງເຈົ້າຂອງ
ມັນຈະຫັນໄປທາງໃດ ກໍຈະເລີນຮຸ່ງເຮືອງທາງນັ້ນ
9 ບຸກຄົນຜູ້ປົດບັງການລະເມີດ ກໍຊອກຫາຄວາມຮັກ
ແຕ່ຄົນກ່າວເລື່ອງນັ້ນຊໍ້າຊາກ ກໍເຮັດໃຫ້ເພື່ອນສະນິດແຍກຈາກກັນ

10 ຄຳຕຳໜິເຂົ້າໄປໃນຄົນສະຫລາດ
ເລິກກວ່າຂ້ຽນຕີຄົນໂງ່ຈັກຮ້ອຍເທື່ອ
11 ຄົນຊົ່ວຮ້າຍກໍສະແຫວງຫາແຕ່ການແຕກແຍກ
ສະນັ້ນ ຈະມີຜູ້ສົ່ງຂ່າວໂຫດຮ້າຍໄປສູ້ລາວ
12 ໃຫ້ຄົນໄປພົບແມ່ໝີທີ່ລູກມັນຖືກລັກໄປ
ກໍຍັງດີກວ່າໄປພົບຄົນບໍ່ມີປັນຍາໃນຄວາມໂງ່ຂອງລາວ
13 ຖ້າຄົນໜຶ່ງຄົນໃດເຮັດຊົ່ວຕອບແທນຄວາມດີ
ຄວາມຊົ່ວຈະບໍ່ຫວິດຈາກເຮືອນຂອງຄົນນັ້ນ
14 ເມື່ອເລີ່ມຕົ້ນຜິດຖຽງກັນ ກໍຄືກັບປ່ອຍນໍ້າໃຫ້ໄຫລ
ສະນັ້ນ, ຈົ່ງເລີກເສຍກ່ອນຈະເກີດການຜິດຖຽງກັນ
15 ບຸກຄົນທີ່ວ່າຄົນຊົ່ວຮ້າຍຖືກ ແລະບຸກຄົນທີ່ລົງໂທດຄົນຊອບທຳ
ທັງສອງກໍເປັນທີ່ກຽດຊັງແກ່ພຣະຜູ້ເປັນເຈົ້າ
16 ເປັນຫຍັງຄົນໂງ່ຈຶ່ງມີເງິນໃນມື ເພື່ອຊື້ປັນຍາ
ໃນເມື່ອລາວບໍ່ມີຄວາມຄິດ
17 ມິດສະຫາຍກໍມີຄວາມຮັກຢູ່ທຸກເວລາ
ແລະພີ່ນ້ອງກໍເກີດມາ ເພື່ອຊ່ວຍກັນຍາມທຸກຍາກ
18 ຄົນທີ່ບໍ່ມີຄວາມເຂົ້າໃຈ ກໍໃຫ້ຄຳປະຕິຍານ
ແລະເປັນຜູ້ຮັບປະກັນຕໍ່ໜ້າເພື່ອນຂອງຕົນ
19 ຜູ້ທີ່ຮັກການລະເມີດ ກໍຮັກການຜິດຖຽງກັນ
ຜູ້ທີ່ເຮັດປະຕູເຮືອນຂອງຕົນໃຫ້ສູງ ກໍສະແຫວງຫາການທຳລາຍ
20 ຜູ້ໜຶ່ງຜູ້ໃດມີໃຈປະຈົບປະແຈງ ກໍບໍ່ພົບສິ່ງທີ່ດີອັນໃດ
ແລະຜູ້ທີ່ລີ້ນບໍ່ສັດຊື່ ກໍຕົກຢູ່ໃນຄວາມຍາກລຳບາກ
21 ພໍ່ທີ່ມີລູກເຮັດຊົ່ວຊ້າ ກໍມີຄວາມໂສກເສົ້າ
ແລະພໍ່ຂອງຄົນໂງ່ ກໍບໍ່ມີຄວາມຊື່ນບານ
22 ໃຈຊື່ນບານເປັນຢາຢ່າງດີ
ແຕ່ຈິດໃຈທີ່ບໍ່ມີຄວາມອົດທົນເຮັດໃຫ້ກະດູກຫ່ຽວແຫ້ງ
23 ຄົນຊົ່ວຮ້າຍຮັບສິນບົນຈາກບ່ອນລັບລີ້
ເພື່ອປັ່ນປ່ວນທາງແຫ່ງຄວາມຍຸດຕິທຳ
24 ຄົນທີ່ມີຄວາມເຂົ້າໃຈ ລາວຕັ້ງໜ້າມຸ້ງໄປສູ່ປັນຍາ
ແຕ່ຕາຂອງຄົນໂງ່ຢູ່ທີ່ສຸດປາຍແຜ່ນດິນໂລກ
25 ລູກຊາຍໂງ່ ກໍເປັນຄວາມທຸກໂສກແກ່ພໍ່
ແລະເປັນຄວາມຂົມຂື່ນແກ່ຍິງຜູ້ໃຫ້ກຳເນີດ
26 ການລົງໂທດຄົນຍຸດຕິທຳກໍບໍ່ດີ

ການຕີເຈົ້ານາຍ ເພາະເຫດຄວາມທ່ຽງທຳກໍຜິດ
27 ບຸກຄົນທີ່ຫ້າມຖ້ອຍຄຳຂອງລາວ ກໍເປັນຄົນມີຄວາມຮູ້
ແລະຜູ້ທີ່ມີຈິດໃຈເຢັນ ກໍເປັນຄົນມີຄວາມເຂົ້າໃຈ
28 ເຖິງຈະເປັນຄົນໂງ່ ຫາກມິດງຽບຢູ່ ກໍຖືວ່າເປັນຄົນທີ່ສະຫລາດ
ຄົນທີ່ງັບປາກຂອງຕົນໄວ້ ກໍຖືວ່າເປັນຄົນມີຄວາມເຂົ້າໃຈ

# ບົດທີ 18

## ຄຳສັ່ງສອນເລື່ອງຄວາມຊອບທຳ

1 ຄົນທີ່ຫລົບຕົວໄປຈາກຜູ້ອື່ນ ຕັ້ງໃຈເຮັດຕາມໃຈຕົນເອງ
ແລະບໍ່ເຫັນພ້ອມກັບສະຕິປັນຍາທັງຫລາຍ
2 ຄົນໂງ່ບໍ່ເພີດເພີນໃນຄວາມເຂົ້າໃຈ
ແຕ່ເພີດເພີນໃນການສະແດງຄວາມຄິດເຫັນຂອງຕົນເທົ່ານັ້ນ
3 ເມື່ອຄົນຊົ່ວຮ້າຍມາເຖິງ ຄວາມໝິ່ນປະໝາດກໍມາດ້ວຍ
ແລະຄວາມອັບອາຍມາກັບຄວາມບໍ່ມີກຽດ
4 ຄຳເວົ້າຂອງຄົນເຮົາເປັນນໍ້າເລິກ
ນໍ້າພຸແຫ່ງປັນຍາເປັນເໝືອນກັບນໍ້າທີ່ໄຫລ
5 ການຈະເຂົ້າຂ້າງຄົນຊົ່ວ
ເພື່ອຈະບັງຄັບຄົນຊອບທຳເລື່ອງຄວາມຍຸດຕິທຳ ກໍບໍ່ດີ
6 ຮີມປາກຂອງຄົນໂງ່ນຳການຜິດຖຽງກັນມາ
ແລະປາກຂອງລາວ ກໍເຊື້ອເຊີນການຂ້ຽນຕີ
7 ປາກຂອງຄົນໂງ່ເປັນສິ່ງທຳລາຍຕົວລາວເອງ
ແລະຮີມປາກຂອງລາວກໍເປັນບ້ວງແຮ້ວດັກຈັບຈິດໃຈຕົນເອງ
8 ຖ້ອຍຄຳຂອງຜູ້ເວົ້ານິນທາ ກໍເປັນເໝືອນບາດແຜ
ມັນລົງໄປຫາພາຍໃນຂອງຮ່າງກາຍ
9 ແລ້ວຄົນທີ່ຂີ້ຄ້ານໃນການງານ
ກໍເປັນພີ່ນ້ອງກັບຄົນມັກທຳລາຍ
10 ພຣະນາມຂອງພຣະຜູ້ເປັນເຈົ້າເປັນປ້ອມເຂັ້ມແຂງ
ຄົນຊອບທຳແລ່ນເຂົ້າໄປໃນນັ້ນ ແລະປອດໄພ
11 ຊັບສົມບັດຂອງເສດຖີເປັນເມືອງອັນເຂັ້ມແຂງຂອງລາວ
ແລະເປັນເໝືອນກຳແພງສູງຕາມຄວາມຄິດເຫັນຂອງລາວ
12 ໃຈຂອງຄົນກໍຈອງຫອງກ່ອນເຖິງການຖືກທຳລາຍ
ແຕ່ຄວາມຖ່ອມໃຈຍ່າງຢູ່ທາງໜ້າກຽດ
13 ຖ້າຄົນໜຶ່ງຄົນໃດຕອບກ່ອນທີ່ຕົນຈະໄດ້ຍິນ

ກໍເປັນຄວາມໂງ່ ແລະຄວາມອັບອາຍຂອງລາວ
14 ຈິດໃຈຂອງຄົນທົນຕໍ່ຄວາມເຈັບປ່ວຍໄດ້
ແຕ່ຈິດໃຈທີ່ຊອກຊໍ້າຈະມີໃຜທົນໄດ້
15 ໃຈຂອງຄົນຮອບຄອບຍ່ອມຫາຄວາມຮູ້
ແລະຫູຂອງນັກປາດສະແຫວງຫາຄວາມຮູ້
16 ຂອງຂວັນຂອງຜູ້ໜຶ່ງຜູ້ໃດຍ່ອມເປີດທາງໃຫ້ຜູ້ນັ້ນ
ແລະນຳລາວມາເຖິງຄົນໃຫຍ່ຄົນໂຕ
17 ບຸກຄົນຜູ້ເວົ້າຄະດີຂອງຕົນກ່ອນ ກໍເບິ່ງຄືເປັນຝ່າຍຖືກ
ຈົນກວ່າຝ່າຍຕົງກັນຂ້າມຈະມາສອບສວນລາວ
18 ການຈັບສະຫລາກເຮັດໃຫ້ການຜິດຖຽງກັນສິ້ນສຸດ
ແລະຕັດສິນຄູ່ໂຕ້ແຍ້ງທີ່ມີກຳລັງ
19 ການຄືນດີກັນກັບພີ່ນ້ອງທີ່ສະດຸດກັນແລ້ວ
ກໍຍາກ ກວ່າການຊະນະເມືອງທີ່ເຂັ້ມແຂງ
ແລະການຜິດຖຽງກັນກໍເປັນເໝືອນກັບການໄຂປະຕູເມືອງ
20 ທ້ອງຈະອີ່ມ ກໍມາຈາກຜົນແຫ່ງປາກຂອງລາວເອງ
ລາວຈະພໍໃຈ ເພາະຜົນອັນເກີດຈາກຮີມປາກຂອງຕົນ
21 ຄວາມເປັນ ແລະຄວາມຕາຍ ຢູ່ທີ່ອຳນາດຂອງລີ້ນ
ແລະບັນດາຜູ້ທີ່ຮັກມັນກໍຈະກິນຜົນຂອງມັນ
22 ບຸກຄົນທີ່ພົບເມຍກໍພົບຂອງດີ
ແລະໄດ້ຄວາມຍິນດີຈາກພຣະຜູ້ເປັນເຈົ້າ
23 ຄົນຍາກຈົນໃຊ້ຄຳອ້ອນວອນ
ແຕ່ຄົນຮັ່ງມີຕອບສຽງຫຍາບຊ້າ
24 ຄົນທີ່ມີເພື່ອນຕ້ອງທຳທ່າເຮັດເປັນເພື່ອນ
ແຕ່ມີມິດຄົນໜຶ່ງ ທີ່ໃກ້ຊິດຍິ່ງກວ່າພີ່ນ້ອງ

# ບົດທີ 19

## ຄົນສະຫລາດປຽບທຽບກັບຄົນໂງ່ຈ້າ

1 ຄົນຍາກຈົນຜູ້ດຳເນີນໃນຄວາມສັດຊື່ຂອງລາວ
ກໍດີກວ່າຄົນທີ່ມີຮີມປາກປະຈົບປະແຈງ ແລະເປັນຄົນໂງ່
2 ຄົນທີ່ຈິດໃຈບໍ່ມີຄວາມຮູ້ ກໍບໍ່ດີ
ແລະຄົນທີ່ຍ່າງຕີນໜັກ ກໍມັກຜິດພາດ
3 ຄວາມໂງ່ຂອງຄົນນຳຄວາມຈິບຫາຍມາເຖິງລາວ
ແລະໃຈຂອງລາວຕໍ່ຕ້ານພຣະຜູ້ເປັນເຈົ້າ

4 ຊັບສົມບັດເພີ່ມເພື່ອນເປັນຈຳນວນຫລາຍ
ແຕ່ຄົນຍາກຈົນ ກໍຖືກເພື່ອນຂອງລາວແຍກໄປ
5 ພະຍານບໍ່ຈິງ ຈະບໍ່ໄດ້ຮັບໂທດ ກໍເປັນໄປບໍ່ໄດ້
ແລະຜູ້ທີ່ເວົ້າຄຳຂີ້ຕົວະຈະໜີບໍ່ພົ້ນ
6 ຄົນເປັນຈຳນວນຫລາຍເອົາອົກເອົາໃຈເຈົ້ານາຍ
ແລະທຸກຄົນກໍເປັນມິດກັບຄົນທີ່ໃຫ້ຂອງຂວັນ
7 ບັນດາພີ່ນ້ອງຂອງຄົນຍາກຈົນ ກໍຍັງກຽດຊັງລາວ
ມິດສະຫາຍຈະຍິ່ງໄກຈາກລາວຈັກເທົ່າໃດ
ລາວພະຍາຍາມເວົ້າ ແຕ່ບໍ່ມີໃຜຍອມຟັງ
8 ບຸກຄົນທີ່ໄດ້ປັນຍາກໍຮັກຈິດໃຈຕົນເອງ
ບຸກຄົນຜູ້ຮັກສາຄວາມເຂົ້າໃຈໄວ້ຈະພົບສິ່ງທີ່ດີ
9 ພະຍານບໍ່ຈິງຈະບໍ່ໄດ້ຮັບໂທດ ກໍເປັນໄປບໍ່ໄດ້
ແລະຄົນທີ່ເວົ້າຄຳຂີ້ຕົວະຈະຈິບຫາຍ
10 ການທີ່ຄົນໂງ່ຈະຢູ່ຢ່າງສຳລານ ກໍບໍ່ເໝາະຢູ່ແລ້ວ
ການທີ່ຂ້າທາດຈະປົກຄອງເຈົ້ານາຍ ກໍຍິ່ງບໍ່ເໝາະຫລາຍກວ່ານັ້ນອີກ
11 ສາມັນສຳນຶກທີ່ດີເຮັດໃຫ້ຄົນຮ້າຍຊ້າ
ແລະການເບິ່ງຂ້າມການລະເມີດເສຍ ກໍເປັນສະຫງ່າລາສີແກ່ລາວ
12 ພະພິໂລດຂອງກະສັດເໝືອນກັບສຽງຄຳລາມຂອງສິງໃຫຍ່
ແຕ່ຄວາມຍິນດີຂອງພະອົງເປັນເໝືອນດັ່ງນ້ຳໝອກເທິງຜັກຫຍ້າ
13 ລູກຊາຍໂງ່ຈ້າເປັນຄວາມຈິບຫາຍຂອງພໍ່ຂອງລາວ
ແລະການຜິດກັນຂອງເມຍ ກໍເປັນເໝືອນກັບນ້ຳຝົນຍ້ອຍຢູ່ບໍ່ຢຸດ
14 ເຮືອນ ແລະຊັບສົມບັດເປັນມໍລະດົກມາຈາກພໍ່
ແຕ່ເມຍທີ່ຮູ້ເຫັນກໍມາຈາກພຣະຜູ້ເປັນເຈົ້າ
15 ຄວາມຂີ້ຄ້ານເຮັດໃຫ້ຫລັບສະນິດ
ແລະຄົນຂີ້ຄ້ານຈະຕ້ອງຫິວ
16 ຄົນທີ່ຮັກສາພຣະບັນຍັດ ກໍຮັກສາຊີວິດຂອງຕົນ
ຄົນທີ່ໝິ່ນປະໝາດເສັ້ນທາງທັງຫລາຍຂອງພຣະອົງກໍຈະເຖິງຕາຍ
17 ບຸກຄົນທີ່ເມດຕາຄົນຍາກຈົນ ກໍໃຫ້ພຣະຜູ້ເປັນເຈົ້າຊົງຢືມ
ແລະພຣະອົງຈະຊົງຕອບແທນແກ່ການກະທຳຂອງລາວ
18 ຈົ່ງຕີສອນລູກຊາຍຂອງຕົນ ເມື່ອຍັງມີຄວາມຫວັງ
ຢ່າໝົດກຳລັງໃຈ ເພາະການຮ້ອງໄຫ້ຂອງລາວ
19 ຄົນທີ່ໃຈຮ້າຍຈະຕ້ອງໄດ້ຮັບໂທດ ເພາະຖ້າເຈົ້າຊ່ວຍລາວໃຫ້ພົ້ນແລ້ວ
ກໍຕ້ອງຊ່ວຍລາວໃຫ້ພົ້ນອີກ

20 ຈົ່ງຟັງຄຳແນະນຳ ແລະຮັບຄຳສັ່ງສອນ
ເພື່ອເຈົ້າຈະໄດ້ປັນຍາສຳລັບອະນາຄົດ
21 ໃນໃຈຂອງມະນຸດມີແຜນງານເປັນຈຳນວນຫລາຍ
ແຕ່ຄຳປຶກສາຂອງພຣະຜູ້ເປັນເຈົ້ານັ້ນແຫລະ ຈະດຳລົງຢູ່ໄດ້
22 ສິ່ງທີ່ຄວນປາດຖະໜາໃນຕົວມະນຸດ ຄືຄວາມເມດຕາ
ແລະຄົນຍາກຈົນ ກໍຍັງດີກວ່າຄົນຂີ້ຕົວະ
23 ຄວາມຢຳເກງພຣະຜູ້ເປັນເຈົ້ານຳໄປສູ່ຊີວິດ
ແລະຜູ້ທີ່ໄດ້ຮັບແລ້ວ ກໍມີຄວາມພໍໃຈ ຈະບໍ່ມີອັນຕະລາຍໃດໆເຂົ້າມາເຖິງລາວ
24 ຄົນຂີ້ຄ້ານຍັດມືຂອງຕົນໄວ້ໃນອາຫານ
ແລະຈະບໍ່ຍອມເອົາມາສູ່ປາກຂອງຕົນອີກ
25 ຈົ່ງຕີຄົນທີ່ມັກເຍາະເຍີ້ຍ ແລະຄົນໂງ່ຈະຮຽນຮູ້ເອງ
ຈົ່ງຕັກເຕືອນຄົນທີ່ມີຄວາມເຂົ້າໃຈ ແລະລາວຈະເຂົ້າໃຈຄວາມຮູ້
26 ຜູ້ທີ່ທາລຸນພໍ່ ແລະຂັບໄລ່ແມ່ຂອງຕົນໄປ
ກໍເປັນລູກຊາຍຜູ້ເຮັດໃຫ້ເກີດຄວາມອັບອາຍ ແລະຖືກຕຳໜິ
27 ລູກຊາຍຂອງເຮົາເອີຍ
ຈົ່ງຢຸດຟັງຄຳສັ່ງສອນທີ່ເຮັດໃຫ້ເຈົ້າຫລົງໄປຈາກຄຳແຫ່ງຄວາມຮູ້
28 ພະຍານທີ່ອະທຳ ກໍເຍາະເຍີ້ຍຄວາມຍຸດຕິທຳ
ແລະປາກຂອງຄົນຊົ່ວຮ້າຍ ກໍກືນກິນແຕ່ຄວາມຊົ່ວຊ້າ
29 ການປັບໂທດມີພ້ອມຢູ່ແລ້ວສຳລັບຄົນມັກເຍາະເຍີ້ຍ
ແລະການຂ້ຽນຕີກໍສຳລັບຫລັງຂອງຄົນໂງ່

# ບົດທີ 20

## ຄຳເຕືອນສະຕິ ແລະຄຳສັ່ງສອນ

1 ເຫລົ້າອະງຸ່ນເຮັດໃຫ້ເກີດການເຍາະເຍີ້ຍ
ແລະເຫລົ້າກໍເຮັດໃຫ້ເປັນຄົນອັນທະພານ
ຜູ້ໃດຖືກມັນຫລອກລວງ ກໍບໍ່ເປັນຄົນສະຫລາດ
2 ຄວາມຕົກໃຈຢ້ານຂອງກະສັດ ກໍເໝືອນກັບສິງໂຕໃຫຍ່ຄຳລາມ
ຜູ້ໃດຍົວະເຍົ້າພະອົງໃຫ້ໂກດຮ້າຍ ກໍເຮັດຜິດຕໍ່ຊີວິດຂອງຕົນເອງ
3 ການຮັກສາຕົນໃຫ້ພົ້ນຈາກການຜິດຖຽງກັນ ກໍເປັນກຽດ
ແຕ່ຄົນໂງ່ທຸກຄົນຈະເຂົ້າຫຍຸ້ງກ່ຽວເລື່ອງຂອງຄົນອື່ນ
4 ຄົນຂີ້ຄ້ານບໍ່ໄຖນາໃນລະດູໜາວ ລາວຈຶ່ງຈະສະແຫວງຫາ
ເມື່ອເຖິງລະດູເກັບກ່ຽວ ແຕ່ບໍ່ພົບຫຍັງເລີຍ
5 ຄຳປຶກສາໃນໃຈຂອງຄົນເປັນຄືນ້ຳເລິກ

ແຕ່ຄົນທີ່ມີຄວາມເຂົ້າໃຈຈະສາມາດພຸ່ງມັນອອກມາໄດ້
6 ຄົນເປັນຈຳນວນຫລາຍເວົ້າເຖິງຄວາມດີຂອງຕົນເອງ
ແຕ່ໃຜຈະຫາຄົນສັດຊື່ພົບໄດ້
7 ຄົນຍຸດຕິທຳດຳເນີນໃນຄວາມສັດຊື່ຂອງຕົນ
ບຸດທັງຫລາຍທີ່ເກີດຕາມລາວມາຍ່ອມໄດ້ຮັບພອນ
8 ກະສັດຜູ້ປະທັບເທິງບັນລັງພິພາກສາ
ຍ່ອມຊົງຝັດຄວາມຊົ່ວທັງຫລາຍອອກດ້ວຍພຣະເນດຂອງພຣະອົງ
9 ຜູ້ໃດຈະກ່າວໄດ້ວ່າ “ຂ້າພະເຈົ້າໄດ້ເຮັດໃຫ້ໃຈຂອງຂ້າພະເຈົ້າໃຫ້ສະອາດແລ້ວ
ຂ້າພະເຈົ້າບໍລິສຸດພົ້ນບາບຂອງຂ້າພະເຈົ້າ”
10 ເຄື່ອງຊັ່ງ ແລະເຄື່ອງແທກໂກງ
ທັງສອງເປັນທີ່ໜ້າກຽດຊັງແກ່ພຣະຜູ້ເປັນເຈົ້າເທົ່າໆກັນ
11 ແມ່ນແຕ່ເດັກນ້ອຍ ກໍສະແດງຕົວໂດຍການປະພຶດຂອງລາວວ່າ
ສິ່ງທີ່ລາວເຮັດຈະບໍລິສຸດ ແລະຖືກຕ້ອງຫລືບໍ່
12 ຫູທີ່ຟັງໄດ້ ແລະຕາທີ່ເບິ່ງເຫັນ
ພຣະຜູ້ເປັນເຈົ້າຊົງສ້າງມັນທັງສອງ
13 ຢ່າຮັກການຫລັບໄຫລ ຢ້ານວ່າເຈົ້າຈະມາເຖິງຄວາມຍາກຈົນ
ຈົ່ງມືນຕາຂອງເຈົ້າ ແລະເຈົ້າຈະໄດ້ກິນອາຫານອີ່ມ
14 ຜູ້ຊື້ເວົ້າວ່າ “ບໍ່ດີ ຊົ່ວ”
ແຕ່ເມື່ອລາວໄປແລ້ວ ລາວຈຶ່ງເວົ້າໂອ້ອວດ
15 ມີທອງຄຳ ແລະທັບທິມມີຄ່າເປັນຈຳນວນຫລາຍ
ແຕ່ຮີມປາກທີ່ມີຄວາມຮູ້ ກໍເປັນເພັດນິນຈິນດາປະເສີດ
16 ຈົ່ງຈ່ອງເສື້ອຜ້າຂອງລາວໄວ້ ເມື່ອລາວໃຫ້ສັນຍາກັບຄົນອື່ນ
ແລະຍຶດຕົວລາວໄວ້ ເມື່ອເຂົາຮັບປະກັນຍິງຕ່າງດ້າວ
17 ອາຫານທີ່ໄດ້ມາດ້ວຍການຫລອກລວງມີລົດຫວານແກ່ຜູ້ໄດ້ມາ
ແຕ່ພາຍຫລັງປາກຂອງລາວຈະເຕັມໄປດ້ວຍຫີນແຮ່
18 ແຜນງານທັງໝົດດຳລົງຢູ່ໄດ້ດ້ວຍການປຶກສາຫາລື
ຈົ່ງເຮັດສົງຄາມດ້ວຍມີການນຳທີ່ສະຫລາດ
19 ບຸກຄົນທີ່ທຽວນິນທາໄປ ກໍເຜີຍຄວາມລັບໃຫ້ກະຈາຍ
ສະນັ້ນ ຢ່າເຂົ້າສັງຄົມກັບຄົນທີ່ຍົກຍໍດ້ວຍຮີມປາກຂອງຕົນ
20 ຖ້າຄົນໜຶ່ງຄົນໃດດ່າພໍ່ ຫລືແມ່ຂອງຕົນ
ຕະກຽງຂອງລາວຈະດັບມືດມິດ
21 ຕັ້ງແຕ່ແຮກອາດໄດ້ຮັບມໍລະດົກ
ແຕ່ທີ່ສຸດປາຍຈະບໍ່ເປັນພອນ

22 ຢ່າເວົ້າວ່າ “ຂ້າພະເຈົ້າຈະແກ້ແຄ້ນຄວາມຊົ່ວ”
ແຕ່ຈົ່ງລໍຄອຍຖ້າພຣະຜູ້ເປັນເຈົ້າພຣະອົງຈະຊົງຊ່ວຍເຈົ້າໃຫ້ລອດພົ້ນ
23 ເຄື່ອງຊັ່ງສໍ້ໂກງເປັນທີ່ໜ້າກຽດຊັງແກ່ພຣະຜູ້ເປັນເຈົ້າ
ແລະຕາຊິງທີ່ສໍ້ໂກງ ກໍບໍ່ດີ
24 ທາງເດີນຂອງມະນຸດນັ້ນພຣະຜູ້ເປັນເຈົ້າຊົງເປັນຜູ້ສັ່ງ
ແລ້ວຄົນຈະເຂົ້າໃຈທາງຂອງລາວເອງໄດ້ຢ່າງໃດ
25 ຄົນທີ່ກິນຂອງບໍລິສຸດ ແລະມາສອບຖາມເມື່ອປະຕິຍານໄປແລ້ວ
ທັງສອງກໍເປັນບ້ວງແຮ້ວດັກຈັບຕົນເອງ
26 ກະສັດທີ່ສະຫລາດຍ່ອມຝັດຄົນຊົ່ວຮ້າຍ
ແລ້ວຊົງບັນດານກົງຈັກທັບພວກເຂົາ
27 ຈິດວິນຍານຂອງມະນຸດເປັນຕະກຽງຂອງພຣະຜູ້ເປັນເຈົ້າ
ສ່ອງເບິ່ງສ່ວນເລິກທີ່ສຸດຂອງລາວທັງໝົດ
28 ຄວາມເມດຕາ ແລະຄວາມຈິງຮັກສາກະສັດໄວ້
ແລະຄວາມເມດຕາກໍເຊີດຊູພະທີ່ນັ່ງຂອງພະອົງໄວ້
29 ສະຫງ່າລາສີຂອງຄົນໜຸ່ມຄືກຳລັງຂອງພວກເຂົາ
ແຕ່ຄວາມງາມຂອງຄົນເຖົ້າ ຄືຜົມຫງອກຂອງພວກເຂົາ
30 ການບວມຊໍ້າດຳຂຽວຂອງບາດແຜ ກໍຊຳລະຄວາມຊົ່ວ
ການຂ້ຽນຕີເຮັດໃຫ້ສ່ວນເລິກທີ່ສຸດສະອາດສະອ້ານ

# ບົດທີ 21

## ທາງແຫ່ງສັນຕິພາບ ແລະຄວາມສຳເລັດ

1 ນໍ້າພະໄທຂອງກະສັດເປັນເໝືອນແມ່ນໍ້າໃນພຣະຫັດຂອງພຣະຜູ້ເປັນເຈົ້າ
ພຣະຜູ້ເປັນເຈົ້າຈະຫັນໄປທາງໃດໆກໍຕາມແຕ່ພຣະອົງຊົງໂຜດ
2 ທາງຂອງຄົນທຸກທາງກໍຖືກຕ້ອງໃນສາຍຕາຂອງຕົນ
ແຕ່ພຣະຜູ້ເປັນເຈົ້າຊົງຊັ່ງເບິ່ງໃຈ
3 ການປະພຶດທີ່ທ່ຽງທຳ ແລະຍຸດຕິທຳ
ກໍເປັນທີ່ພໍພຣະໄທແກ່ພຣະຜູ້ເປັນເຈົ້າຫລາຍກວ່າເຄື່ອງຖວາຍບູຊາ
4 ຕາຈອງຫອງ ໃຈອວດດີ
ແລະການໄຖນາຂອງຄົນຊົ່ວຮ້າຍເປັນບາບ
5 ແຜນງານຂອງຄົນຂະຫຍັນໝັ່ນພຽນນຳໄປສູ່ຄວາມອຸດົມແນ່ນອນ
ແຕ່ທຸກຄົນທີ່ເຮັ່ງຮ້ອນກໍມາສູ່ຄວາມຂັດສົນເທົ່ານັ້ນ
6 ການໄດ້ຄັງຊັບມາດ້ວຍລີ້ນຂີ້ຕົວະ
ກໍຄືຄວາມອະນິດຈັງທີ່ເຄື່ອນໄປໆມາໆຂອງຄົນທີ່ຊອກຫາຄວາມຕາຍ

7 ຄວາມທາລຸນຂອງຄົນຊົ່ວຮ້າຍຈະກວາດພວກເຂົາໄປ
ເພາະພວກເຂົາປະຕິເສດບໍ່ຍອມເຮັດສິ່ງທີ່ຍຸດຕິທຳ
8 ທາງຂອງມະນຸດປະຈົບປະແຈງ ແລະມີຄວາມຜິດ
ແຕ່ການປະພຶດຂອງຜູ້ບໍລິສຸດນັ້ນຖືກຕ້ອງ
9 ຢູ່ທີ່ມຸມເທິງຫລັງຄາເຮືອນ
ກໍດີກວ່າຢູ່ໃນເຮືອນກວ້າງຂວາງຮ່ວມກັບຍິງມັກການຜິດຖຽງກັນ
10 ວິນຍານຂອງຄົນຊົ່ວຮ້າຍປາດຖະໜາຄວາມຊົ່ວ
ເພື່ອນບ້ານຂອງລາວບໍ່ມີຄວາມກະລຸນາໃນສາຍຕາຂອງລາວ
11 ເມື່ອຄົນມັກເຍາະເຍີ້ຍຖືກລົງໂທດ ຄົນໂງ່ກໍສະຫລາດຂຶ້ນ
ເມື່ອນັກປາດໄດ້ຮັບການສັ່ງສອນ ລາວກໍໄດ້ຄວາມຮູ້
12 ຄົນຊອບທຳສັງເກດເບິ່ງເຮືອນຂອງຄົນຊົ່ວຮ້າຍ
ແຕ່ພຣະເຈົ້າຊົງລົ້ມຄົນຊົ່ວຮ້າຍລົງ ເພາະຄວາມຊົ່ວຮ້າຍຂອງພວກເຂົາ
13 ຜູ້ທີ່ອັດຫູ ບໍ່ຟັງສຽງຮ້ອງຂອງຄົນຍາກຈົນ
ຕົວລາວເອງຈະຮ້ອງໃຫ້ ແຕ່ບໍ່ມີໃຜໄດ້ຍິນ
14 ໃຫ້ຂອງຂວັນໃນບ່ອນລັບລີ້ຍ່ອມປ່ຽນຄວາມຮ້າຍ
ໃຫ້ສິນບົນໃນເອິກ ກໍປ່ຽນການໂກດຮ້າຍ
15 ເມື່ອເຮັດການທ່ຽງທຳກໍເປັນການຊື່ນບານແກ່ຄົນຍຸດຕິທຳ
ແຕ່ຄົນເຮັດຄວາມຊົ່ວຊ້າຈະໄດ້ຮັບຄວາມຈິບຫາຍ
16 ຜູ້ໃດທີ່ຫັນເຫໄປຈາກທາງແຫ່ງຄວາມເຂົ້າໃຈ
ກໍຈະພັກຢູ່ໃນທີ່ປະຊຸມຂອງຄົນຕາຍ
17 ຄົນທີ່ຮັກຄວາມເພີດເພີນຈະເປັນຄົນຍາກຈົນ
ຄົນທີ່ຮັກເຫລົ້າອະງຸ່ນ ແລະນ້ຳມັນ ຈະບໍ່ຮັ່ງມີ
18 ຄົນຊົ່ວເປັນຄ່າໄຖ່ສຳລັບຄົນຊອບທຳ
ແລະຄົນລະເມີດແມ່ນສຳລັບຄົນທ່ຽງທຳ
19 ຢູ່ໃນແຜ່ນດິນທຸລະກັນດານ
ກໍດີກວ່າຢູ່ກັບຜູ້ຍິງທີ່ມັກຜິດຖຽງກັນ ແລະມັກຈົ່ມ
20 ຄັງຊັບປະເສີດ ແລະນ້ຳມັນມີຢູ່ໃນທີ່ອາໄສຂອງຄົນສະຫລາດ
ແຕ່ຄົນໂງ່ກິນມັນໝົດ
21 ຜູ້ທີ່ຕິດຕາມຄວາມຊອບທຳ ແລະຄວາມເມດຕາ
ກໍຈະພົບຊີວິດ ແລະຄວາມຊອບທຳ ກັບກຽດຕິຍົດ
22 ນັກປາດປີນເຂົ້າໄປໃນເມືອງຂອງຄົນທີ່ມີກຳລັງ
ແລະພັງທະລາຍທີ່ກຳບັງອັນເຂັ້ມແຂງທີ່ພວກເຂົາໄວ້ວາງໃຈ
23 ຄົນທີ່ຮັກສາປາກ ແລະລີ້ນຂອງຕົນ

ກໍຮັກສາຈິດໃຈຂອງລາວເອງໃຫ້ພົ້ນຄວາມລຳບາກ
24 "ຄົນຈອງຫອງ ແລະຄົນມັກເຍາະເຍີ້ຍ"
ເປັນຊື່ຂອງຄົນທີ່ປະພຶດຕົວດ້ວຍຄວາມຍິ່ງຈອງຫອງ
25 ຄວາມປາດຖະໜາຂອງຄົນຂີ້ຄ້ານຂ້າຕົວລາວເອງ
ເພາະມືຂອງລາວປະຕິເສດບໍ່ເຮັດວຽກ
26 ລາວໂລບໂລພາແຕ່ເຊົ້າຮອດຄໍ່າ
ແຕ່ຄົນຊອບທຳເອົາໃຫ້ ແລະບໍ່ຖ່ວງດຶງໄວ້
27 ເຄື່ອງຖວາຍບູຊາຂອງຄົນຊົ່ວເປັນສິ່ງໜ້າກຽດຊັງ
ເມື່ອລາວນຳມາດ້ວຍໃຈທີ່ຊົ່ວຮ້າຍ ກໍຈະຍິ່ງກວ່ານັ້ນຈັກເທົ່າໃດ
28 ພະຍານບໍ່ຈິງຈະຕ້ອງຈິບຫາຍ
ແຕ່ຖ້ອຍຄຳຂອງຄົນທີ່ຟັງຈະຍັງຄົງຢູ່
29 ຄົນຊົ່ວເຮັດໃຫ້ໜ້າຂອງຕົນດ້ານໄປ
ແຕ່ຄົນທ່ຽງທຳພິຈາລະນາເບິ່ງທາງຂອງຕົນ
30 ປັນຍາກໍດີ ຄວາມເຂົ້າໃຈກໍດີ ຄຳປຶກສາກໍດີ
ຈະເອົາຊະນະພຣະຜູ້ເປັນເຈົ້າບໍ່ໄດ້
31 ມ້າກໍຕຽມໄວ້ພ້ອມແລ້ວສຳລັບສົງຄາມ
ແຕ່ຄວາມປອດໄພເປັນຂອງພຣະຜູ້ເປັນເຈົ້າ

# ບົດທີ 22

## ຫລັກການຝ່າຍສິນລະທຳ ແລະຈິດວິນຍານ

1 ຊື່ສຽງດີເປັນສິ່ງຄວນເລືອກຫລາຍກວ່າຄວາມອຸດົມຮັ່ງມີຫລວງຫລາຍ
ແລະການເປັນທີ່ພໍພຣະໄທ ກໍຍິ່ງຫລາຍກວ່າມີເງິນ ຫລືທອງ
2 ຄົນຮັ່ງມີ ແລະຍາກຈົນປະຊຸມພ້ອມກັນ
ພຣະຜູ້ເປັນເຈົ້າຊົງສ້າງພວກເຂົາທັງໝົດ
3 ຄົນຮູ້ເຫັນອັນຕະລາຍ ແລະໄດ້ເຊື່ອງຕົວຂອງລາວ
ແຕ່ຄົນໂງ່ຍ່າງໄປເລື້ອຍໆແລະຮັບໂທດ
4 ບຳເໜັດຂອງຄວາມຖ່ອມໃຈ ແລະການຢຳເກງພຣະຜູ້ເປັນເຈົ້າ
ຄືຄວາມຮັ່ງມີ ກຽດ ແລະຊີວິດ
5 ໜາມ ແລະບ້ວງແຮ້ວຢູ່ໃນທາງຂອງຄົນປະຈົບປະແຈງ
ຄົນທີ່ຄຸ້ມຄອງຈິດໃຈຕົນເອງຈະຢູ່ໄກເສຍຈາກສິ່ງເຫລົ່ານີ້
6 ຈົ່ງຝຶກເດັກນ້ອຍໃນທາງທີ່ລາວຄວນຈະຍ່າງໄປ
ແລະເມື່ອລາວເຖົ້າແກ່ແລ້ວ ລາວຈະບໍ່ຫວິດຈາກທາງນັ້ນ
7 ຄົນຮັ່ງມີປົກຄອງເໜືອຄົນຍາກຈົນ

ແລະຄົນຂໍຢືມກໍເປັນຂ້າທາດຂອງຄົນໃຫ້ຢືມ
8 ຜູ້ທີ່ຫວ່ານຄວາມຊົ່ວຊ້າ ກໍຈະເກັບກ່ຽວຄວາມຈິບຫາຍ
ແລະທ່ອນໄມ້ແຫ່ງຄວາມໂຫດຮ້າຍຂອງລາວຈະລົ້ມເຫລວ
9 ບຸກຄົນທີ່ມີຕາສະແດງໃຈກວ້າງຂວາງ ກໍຈະຮັບພອນ
ເພາະລາວແບ່ງສ່ວນອາຫານຂອງລາວແກ່ຄົນຍາກຈົນ
10 ຈົ່ງຂັບໄລ່ຄົນມັກເຍາະເຍີ້ຍອອກໄປ ແລ້ວການຜິດຖຽງກັນຈະໝົດໄປ
ເອີ ການຜິດຖຽງກັນ ແລະການໝິ່ນປະໝາດຈະຢຸດລົງ
11 ຄົນທີ່ຮັກໃຈບໍລິສຸດ ເພາະຮີມປາກຂອງລາວມີຄວາມກະລຸນາ
ກະສັດກໍຈະໄດ້ເປັນມິດຂອງລາວ
12 ພຣະເນດ **ພຣະຜູ້ເປັນເຈົ້າ** ເຝົ້າຢູ່ເໜືອຄວາມຮູ້
ແຕ່ພຣະອົງຊົງລົ້ມຖ້ອຍຄຳຂອງຄົນລະເມີດ
13 ຄົນຂີ້ຄ້ານກ່າວວ່າ "ມີໂຕສິງໃຫຍ່ຢູ່ຂ້າງນອກ
ຂ້າພະເຈົ້າຈະຖືກຂ້າຕາມຫົນທາງ"
14 ປາກຂອງຍິງຊົ່ວເປັນຫລຸມເລິກ
ບຸກຄົນຊຶ່ງ **ພຣະຜູ້ເປັນເຈົ້າ** ຊົງພຣະພິໂລດຈະຕົກລົງໃນທີ່ນັ້ນ
15 ຄວາມໂງ່ຖືກຜູກມັດຢູ່ໃນໃຈຂອງເດັກນ້ອຍ
ແຕ່ໄມ້ແສ້ທີ່ຕີສອນ ກໍຈະເຮັດໃຫ້ມັນຫ່າງໄປຈາກລາວ
16 ຜູ້ທີ່ບີບບັງຄັບຄົນຍາກຈົນ ເພື່ອເພີ່ມຊັບສົມບັດຂອງຕົນ
ແລະຜູ້ທີ່ເພີ່ມໃຫ້ແກ່ຄົນຮັ່ງມີ ຈະມາເຖິງຄວາມຂັດສົນຢ່າງແນ່ນອນ
17 ຫງ່ຽງຫູຂອງເຈົ້າ ແລະຟັງຖ້ອຍຄຳຂອງນັກປາດ
ແລະເອົາໃຈໃສ່ຄວາມຮູ້ຂອງເຮົາ
18 ເພາະຖ້າເຈົ້າຮັກສາຖ້ອຍຄຳ ແລະຄວາມຮູ້ນັ້ນໄວ້ໃນຕົວເຈົ້າ
ກໍຈະເປັນຄວາມຊື່ນໃຈແກ່ເຈົ້າ ແລ້ວທັງສອງຈະໝັ້ນຄົງໃນຮີມປາກຂອງເຈົ້າ
19 ເພື່ອຄວາມໄວ້ວາງໃຈຂອງເຈົ້າຈະຢູ່ໃນ **ພຣະຜູ້ເປັນເຈົ້າ**
ເຮົາຈຶ່ງໃຫ້ປະກົດແຈ້ງແກ່ເຈົ້າໃນມື້ນີ້ ຄືແກ່ຕົວເຈົ້າເອງ
20 ເຮົາໄດ້ຂຽນໃຫ້ເຈົ້າເຖິງສິ່ງທີ່ດີທີ່ສຸດ
ເຖິງເລື່ອງການປຶກສາ ແລະຄວາມຮູ້ແລ້ວ ບໍ່ແມ່ນບໍ
21 ເພື່ອໃຫ້ເຈົ້າຮູ້ເຖິງຄວາມແນ່ນອນຂອງຖ້ອຍຄຳແຫ່ງຄວາມຈິງ
ເພື່ອເຈົ້າຈະໄດ້ໃຫ້ຄຳຕອບທີ່ແທ້ຈິງແກ່ຜູ້ທີ່ໃຊ້ເຈົ້າໄປ
22 ຢ່າປຸ້ນຄົນຍາກຈົນ ເພາະລາວເປັນຄົນຍາກຈົນ
ຫລືບີບຄັ້ນຄົນທຸກໃຈທີ່ປະຕູເມືອງ
23 ເພາະວ່າ **ພຣະຜູ້ເປັນເຈົ້າ** ຈະຊົງວ່າຄວາມແທນພວກເຂົາ
ແລະຍຶດຊີວິດຂອງຜູ້ທີ່ຍຶດພວກເຂົາ

24 ຢ່າເປັນມິດກັບຄົນທີ່ມັກຮ້າຍ
ຫລືໄປກັບຄົນມັກໃຈຮ້າຍ
25 ຢ້ານວ່າເຈົ້າຈະຮຽນຮູ້ທາງຂອງຕົນເອງ
ແລະພົວພັນຈິດໃຈເຈົ້າເຂົ້າໃນບ້ວງແຮ້ວ
26 ຢ່າເປັນພວກກັບຜູ້ຄໍ້າປະກັນ
ຢ່າເປັນພວກກັບຜູ້ເປັນປະກັນໜີ້ສິນ
27 ຖ້າເຈົ້າບໍ່ມີຫຍັງຊຳລະລາວ
ເປັນຫຍັງຈຶ່ງຄວນໃຫ້ລາວເອົາບ່ອນນອນໄປຈາກໃຕ້ຕົວເຈົ້າ
28 ຢ່າຍ້າຍຫລັກເຂດເກົ່າແກ່
ຊຶ່ງບັນພະບູລຸດຂອງເຈົ້າໄດ້ປັກໄວ້
29 ເຈົ້າເຫັນຄົນທີ່ຂະຫຍັນໝັ່ນພຽນໃນງານຂອງລາວບໍ
ລາວຈະໄດ້ເຂົ້າເຝົ້າກະສັດ ລາວຈະບໍ່ຢືນຢູ່ຕໍ່ໜ້າຄົນຕໍ່າຕ້ອຍ

# ບົດທີ 23

## ການຕັກເຕືອນເລື່ອງການກິນຫລາຍ ການຄົບຄ້າສະມາຄົມກັບຄົນຊົ່ວ ການລະເລີຍການຕີສອນບຸດ ຍິງເພດສະຫຍາ ແລະການດື່ມເຫລົ້າ

1 ເມື່ອເຈົ້ານັ່ງລົງຮັບປະທານກັບຜູ້ຄອບຄອງບ້ານເມືອງ
ຈົ່ງສັງເກດໃຫ້ດີວ່າແມ່ນຫຍັງຢູ່ຕໍ່ໜ້າເຈົ້າ
2 ຖ້າເຈົ້າເປັນຄົນກິນຫລາຍ
ເຈົ້າຈົ່ງຈໍ່ມີດໄວ້ທີ່ຄໍຂອງເຈົ້າ
3 ຢ່າປາດຖະໜາຂອງແຊບຂອງເພິ່ນ
ເພາະມັນເປັນອາຫານທີ່ຫລອກລວງ
4 ຢ່າເຮັດວຽກເພື່ອຮັ່ງມີ
ຈົ່ງເຊົາເພິ່ງສະຕິປັນຍາຂອງຕົນເອງ
5 ເຈົ້າຈະຈ້ອງຕາຂອງເຈົ້າຢູ່ກັບສິ່ງອະນິດຈັງບໍ
ເພາະຊັບສົມບັດມີປີກ ມັນຈະບິນໄປໃນທ້ອງຟ້າເໝືອນກັບນົກອິນຊີ
6 ຢ່າກິນອາຫານຂອງຄົນຂີ້ຖີ່
ຢ່າປາດຖະໜາຂອງແຊບຂອງລາວ
7 ເພາະລາວຄິດໃນໃຈຢ່າງໃດ ລາວກໍເປັນຢ່າງນັ້ນ
ລາວເວົ້າກັບເຈົ້າວ່າ “ຈົ່ງກິນ ແລະດື່ມສາ” ແຕ່ໃຈຂອງລາວບໍ່ໄດ້ຢູ່ກັບເຈົ້າ
8 ເຈົ້າຈະຕ້ອງຮາກອາຫານທີ່ເຈົ້າໄດ້ກິນເຂົ້າໄປນັ້ນ
ແລະເສຍຖ້ອຍຄຳຫວານຊື່ນຂອງເຈົ້າໄປລ້າໆ
9 ຢ່າເວົ້າໃຫ້ຄົນໂງ່ໄດ້ຍິນ

ເພາະລາວຈະໝິ່ນປະໝາດປັນຍາແຫ່ງຖ້ອຍຄຳຂອງເຈົ້າ
10 ຢ່າໂຍກຍ້າຍເສົາເຂດເກົ່າແກ່
ຫລືເຂົ້າໄປໃນໄຮ່ນາຂອງຄົນກຳພ້າພໍ່
11 ເພາະພຣະຜູ້ໄຖ່ຂອງພວກເຂົາແຂງແຮງ
ພຣະອົງຈະສູ້ຄະດີຂອງພວກເຂົາຕໍ່ເຈົ້າ
12 ຈົ່ງເອົາໃຈຂອງເຈົ້າຮັບຄຳສັ່ງສອນ
ແລະເອົາຫູຂອງເຈົ້າຮັບຖ້ອຍຄຳແຫ່ງຄວາມຮູ້
13 ຢ່າຫ້າມການຕີສອນຈາກເດັກນ້ອຍ
ຖ້າເຈົ້າຕີລາວດ້ວຍໄມ້ແສ້ ລາວຈະບໍ່ຕາຍ
14 ເຈົ້າຈະຕີລາວດ້ວຍໄມ້ແສ້
ແລ້ວເຈົ້າຈະຊ່ວຍຊີວິດຂອງລາວໃຫ້ລອດພົ້ນຈາກນາລົກ
15 ລູກຊາຍຂອງເຮົາເອີຍ ຖ້າໃຈຂອງເຈົ້າສະຫລາດ
ໃຈຂອງເຮົາເອງ ກໍຈະຍິນດີ
16 ເອີ ວິນຍານຂອງເຮົາຈະຊື່ນບານ
ເມື່ອຮີມປາກຂອງເຈົ້າເວົ້າສິ່ງທີ່ຖືກຕ້ອງ
17 ຢ່າໃຫ້ໃຈຂອງເຈົ້າອິດສາຄົນບາບ
ແຕ່ຈົ່ງຢຳເກງພຣະຜູ້ເປັນເຈົ້າແຕ່ເຊົ້າຮອດຄໍ່າ
18 ມີອະນາຄົດແນ່ນອນທີ່ສຸດ
ແລະຄວາມຫວັງຂອງເຈົ້າຈະບໍ່ໄດ້ຖືກຕັດອອກ
19 ລູກຊາຍຂອງເຮົາເອີຍ ຈົ່ງຟັງ ແລະຈົ່ງສະຫລາດ
ແລະນຳໃຈຂອງເຈົ້າໄປໃນທາງນັ້ນ
20 ຢ່າຢູ່ທ່າມກາງຄົນດື່ມເຫລົ້າອະງຸ່ນ
ຫລືທ່າມກາງຄົນທີ່ກິນຊີ້ນຫລາຍໂພດ
21 ເພາະຄົນຂີ້ເມົາ ແລະຄົນກິນຫລາຍຈະມາເຖິງຄວາມຍາກຈົນ
ແລະຄວາມເຫງົານອນຈະເອົາຜ້າຂາດຫົ່ມຄົນນັ້ນ
22 ຈົ່ງຟັງພໍ່ຂອງເຈົ້າຜູ້ໃຫ້ກຳເນີດເຈົ້າ
ແລະຢ່າໝິ່ນປະໝາດແມ່ຂອງເຈົ້າເມື່ອນາງເຖົ້າ
23 ຈົ່ງຊື້ຄວາມຈິງ ແລະຢ່າໄດ້ຂາຍມັນ
ຈົ່ງຊື້ປັນຍາ ຄຳສັ່ງສອນ ແລະຄວາມເຂົ້າໃຈ
24 ພໍ່ຂອງຄົນຊອບທຳຈະຊົມຊື່ນຢ່າງຍິ່ງ
ຜູ້ທີ່ໃຫ້ກຳເນີດບຸດທີ່ສະຫລາດຈະຍິນດີເພາະລາວ
25 ບິດາມານດາຂອງເຈົ້າຈະຍິນດີ
ແລະຜູ້ທີ່ເກີດເຈົ້າກໍຈະຊົມຊື່ນ

26 ລູກຊາຍຂອງເຮົາເອີຍ ຂໍໃຈຂອງເຈົ້າໃຫ້ເຮົາສາ
ແລະໃຫ້ຕາຂອງເຈົ້າສັງເກດເບິ່ງທາງທັງຫລາຍຂອງເຮົາ
27 ເພາະຍິງເພດສະຫຍາເປັນຫລຸມເລິກ
ແລະຍິງເພດສະຫຍາເປັນເໝືອນບໍ່ແຄບໆ
28 ນາງຄອຍຖ້າຢູ່ເໝືອນຢ່າງຄອຍຖ້າເຫຍື່ອ
ແລະເພີ່ມຄົນລະເມີດຂຶ້ນທ່າມກາງມະນຸດ
29 ໃຜທີ່ຮ້ອງໂອຍ ໃຜທີ່ຮ້ອງອຸຍ ໃຜທີ່ມີການຜິດຖຽງກັນ
ໃຜທີ່ມີການຮ້ອງຄາງ ໃຜທີ່ມີບາດແຜປາດສະຈາກເຫດ ຜົນ ໃຜທີ່ມີຕາແດງ
30 ຄືບັນດາຜູ້ທີ່ນັ່ງແຊ່ຢູ່ກັບເຫລົ້າອະງຸ່ນ
ບັນດາຜູ້ທີ່ໄປສະແຫວງຫາເຫລົ້າປະສົມ
31 ຢ່າເບິ່ງເຫລົ້າອະງຸ່ນເມື່ອມັນມີສີແດງ
ເມື່ອເປັນປະກາຍໃນຖ້ວຍ ແລະລົງໄປຢ່າງນິ້ມນວນ
32 ໃນທີ່ສຸດ ມັນຈະຕອດເໝືອນດັ່ງງູ
ແລະມັນຕອດເໝືອນກັບງູພິດ
33 ຕາຂອງເຈົ້າຈະເບິ່ງຍິງຊົ່ວ
ແລະໃຈຂອງເຈົ້າຈະເວົ້າປະຈົບປະແຈງ
34 ເອີ ເຈົ້າຈະເປັນເໝືອນຢ່າງຄົນທີ່ນອນຢູ່ກາງທະເລ
ເໝືອນຢ່າງຄົນທີ່ນອນຢູ່ເທິງເສົາກາງເຮືອໃບ
35 ເຈົ້າຈະກ່າວວ່າ "ພວກເຂົາຕີຂ້າພະເຈົ້າ ແຕ່ຂ້າພະເຈົ້າບໍ່ເຈັບ
ພວກເຂົາຕີຂ້າພະເຈົ້າ ແຕ່ຂ້າພະເຈົ້າບໍ່ຮູ້ສຶກ
ຂ້າພະເຈົ້າຈະຕື່ນຕອນໃດໜໍ ຂ້າພະເຈົ້າຈະສະແຫວງຫາການດື່ມອີກ"

# ບົດທີ 24

## ຄຳຕັກເຕືອນເລື່ອງການອິດສາຄົນຊົ່ວ

1 ຢ່າຄິດອິດສາຄົນຊົ່ວ
ຫລືປາດຖະໜາຢູ່ຮ່ວມກັບພວກເຂົາ
2 ເພາະວ່າໃຈຂອງພວກເຂົາຄິດປະກອບການທຳລາຍ
ແລະຮີມປາກຂອງພວກເຂົາເວົ້າຄວາມເສຍຫາຍ
3 ເຮືອນນັ້ນ ພວກເຂົາສ້າງກັນດ້ວຍປັນຍາ
ແລະສະຖາປະນາມັນໄວ້ດ້ວຍຄວາມເຂົ້າໃຈ
4 ໂດຍຄວາມຮູ້ ບັນດາຫ້ອງກໍເຕັມໄປດ້ວຍຄວາມອຸດົມຮັ່ງມີ
ທັງໝົດລ້ວນແຕ່ປະເສີດ ແລະງົດງາມ
5 ຄົນສະຫລາດມີກຳລັງຫລາຍ

ແລະຄົນມີຄວາມຮູ້ກໍເພີ່ມກຳລັງຂຶ້ນ
6 ເພາະວ່າ ໂດຍການນຳທີ່ສະຫລາດ ເຈົ້າກໍຈະເຂົ້າສົງຄາມໄດ້
ແລະຍ້ອນມີທີ່ປຶກສາຫລາຍ ຈຶ່ງມີຄວາມປອດໄພ
7 ສຳລັບຄົນໂງ່ນັ້ນ ປັນຍາສູງເກີນໄປ
ທີ່ປະຕູເມືອງລາວບໍ່ອ້າປາກເວົ້າ
8 ບຸກຄົນຜູ້ວາງແຜນງານເຮັດຄວາມຊົ່ວ
ເຂົາເຈົ້າເອີ້ນກັນວ່າຄົນເລ້ຫລ່ຽມ
9 ການຄິດປະດິດຄວາມໂງ່ເປັນບາບ
ແລະຄົນມັກເຍາະເຍີ້ຍເປັນທີ່ໜ້າກຽດຊັງແກ່ມະນຸດ
10 ຖ້າເຈົ້າທໍ້ໃຈໃນວັນແຫ່ງຄວາມຊົ່ວຮ້າຍ
ກຳລັງຂອງເຈົ້າກໍຈະນ້ອຍ
11 ຖ້າເຈົ້າບໍ່ຊ່ວຍບັນດາຜູ້ທີ່ຖືກນຳໄປສູ່ຄວາມມໍລະນາ
ແລະບໍ່ຊ່ວຍບັນດາຜູ້ຖືກນຳໄປຂ້າ ໃຫ້ລອດພົ້ນ
12 ຖ້າເຈົ້າຈະກ່າວວ່າ “ເບິ່ງແມ ເຮົາບໍ່ຮູ້ເລື່ອງນີ້ເລີຍ”
ພຣະອົງຜູ້ຊົງຊັ່ງໃຈຈະບໍ່ຊົງທອດພຣະເນດເຫັນບໍ
ພຣະອົງຜູ້ຊົງເຝົ້າວິນຍານຢູ່ເໜືອເຈົ້າຈະບໍ່ຮູ້ບໍ
ແລະພຣະອົງຈະບໍ່ຊົງເອີ້ນເອົາຈາກທຸກຄົນຕາມການເຮັດຂອງເຂົາເຈົ້າບໍ
13 ລູກຊາຍຂອງເຮົາເອີຍ ຈົ່ງຮັບປະທານນໍ້າເຜີ້ງ
ເພາະເປັນຂອງດີ ແລະຮັງເຜີ້ງ ຊຶ່ງມີລົດຫວານ
14 ການຮູ້ຈັກປັນຍາກໍເປັນເຊັ່ນນັ້ນແກ່ວິນຍານຂອງເຈົ້າ
ເມື່ອເຈົ້າພົບປັນຍາ ກໍຈະມີບຳເໜັດ ແລະຄວາມຫວັງຂອງເຈົ້າຈະບໍ່ຖືກຕັດອອກ
15 ຄົນຊົ່ວຮ້າຍເອີຍ ຢ່າຄອຍຖ້າເພື່ອຕໍ່ສູ້ກັບທີ່ຢູ່ອາໄສຂອງຄົນຊອບທຳ
ຢ່າປຸ້ນເຮືອນຂອງລາວ
16 ເພາະຄົນຍຸດຕິທຳລົ້ມລົງເຈັດເທື່ອແລ້ວກໍລຸກຂຶ້ນອີກ
ແຕ່ຄົນຊົ່ວຮ້າຍຈະຕົກຢູ່ໃນອາການຮ້າຍ
17 ຢ່າຍິນດີເມື່ອສັດຕູຂອງເຈົ້າລົ້ມ
ແລະຢ່າໃຫ້ໃຈຂອງເຈົ້າຍິນດີເມື່ອລາວສະດຸດ
18 ຢ້ານວ່າພຣະຜູ້ເປັນເຈົ້າຈະທອດພຣະເນດ ແລະບໍ່ຊົງພໍພຣະໄທ
ແລະຊົງຫັນຄວາມໂກດຮ້າຍອອກຈາກລາວ
19 ເຈົ້າຢ່າກະວົນກະວາຍເພາະຄົນຊົ່ວ
ແລະຢ່າມີໃຈອິດສາຄົນຊົ່ວຮ້າຍ
20 ເພາະຄົນຊົ່ວຈະບໍ່ມີບຳເໜັດ
ຕະກຽງຂອງຄົນຊົ່ວຮ້າຍຈະຖືກດັບໄປ

21 ລູກຊາຍຂອງເຮົາເອີຍ ຈົ່ງຢຳເກງພຣະຜູ້ເປັນເຈົ້າ ແລະກະສັດ
ຢ່າເຂົ້າສ່ວນກັບຄົນທີ່ຖອຍຫລັງກັບຈາກພຣະອົງທັງສອງນັ້ນ
22 ເພາະໄພພິບັດຈາກພຣະອົງທັງສອງຈະລຸກຂຶ້ນຕໍ່ສູ້
ແລະຜູ້ໃດຈະຮູ້ເຖິງຄວາມຈິບຫາຍທີ່ຈະມາຈາກພຣະອົງທັງສອງ
23 ຂໍ້ຄວາມເຫລົ່ານີ້ເປັນຄຳກ່າວຂອງນັກປາດ
ເພາະການເຫັນແກ່ໜ້າຄົນໜຶ່ງຄົນໃດໃນການຕັດສິນນັ້ນກໍບໍ່ດີເລີຍ
24 ຜູ້ທີ່ກ່າວແກ່ຄົນຊົ່ວຮ້າຍວ່າ “ເຈົ້າບໍ່ມີຄວາມຜິດ”
ຈະຖືກຊົນຊາດທັງຫລາຍສາບແຊ່ງ ແລະປະຊາຊາດຈະລັງກຽດ
25 ແຕ່ບັນດາຜູ້ທີ່ນາບຊູ່ພວກເຂົາ ກໍຈະມີຄວາມປິຕິຍິນດີ
ແລະພຣະພອນອັນດີຈະມີຢູ່ກັບຄົນນັ້ນ
26 ທຸກຄົນຈະຈູບຮີມປາກຂອງຜູ້ໃຫ້ຄຳຕອບທີ່ຖືກ
27 ຈົ່ງຕຽມງານຂອງເຈົ້າຢູ່ພາຍນອກ
ເຮັດທຸກຢ່າງຂອງເຈົ້າໃຫ້ພ້ອມໃນທົ່ງນາ
ແລະຫລັງຈາກນັ້ນ ຈົ່ງສ້າງເຮືອນຂອງເຈົ້າ
28 ຢ່າເປັນພະຍານໃສ່ຮ້າຍເພື່ອນບ້ານຂອງເຈົ້າຢ່າງບໍ່ມີເຫດຜົນ
ແລະຢ່າຫລອກລວງດ້ວຍຮີມປາກຂອງເຈົ້າ
29 ຢ່າກ່າວວ່າ “ຂ້າພະເຈົ້າຈະເຮັດແກ່ລາວຢ່າງທີ່ລາວໄດ້ເຮັດແກ່ຂ້າພະເຈົ້າ”
30 ເຮົາຜ່ານໄຮ່ນາຂອງຄົນຂີ້ຄ້ານ
ຂ້າງສວນອະງຸ່ນຂອງຄົນທີ່ຂາດຄວາມເຂົ້າໃຈ
31 ແລະເບິ່ງແມ ມີໜາມປົ່ງຂຶ້ນເຕັມໄປໝົດ
ແລະແຜ່ນດິນກໍເຕັມໄປດ້ວຍຫຍ້າ ແລະກຳແພງຫີນຂອງມັນກໍເພພັງ
32 ເຮົາໄດ້ເຫັນ ແລະພິຈາລະນາເບິ່ງ
ເຮົາເບິ່ງ ແລະໄດ້ຮັບຄຳສັ່ງສອນ
33 “ຫລັບອີກຈັກໜ້ອຍ ນອນອີກໜ້ອຍໜຶ່ງ
ກອດມືພັກຈັກໜ້ອຍ
34 ແລ້ວຄວາມທຸກຈົນຈະມາຫາເຈົ້າແບບນັກທ່ອງທ່ຽວ
ຄວາມຂັດສົນເປັນເໝືອນຢ່າງຄົນຖືອາວຸດ”

# ບົດທີ 25

## ຄຳຕັກເຕືອນ ແລະຄຳສັ່ງສອນຕ່າງໆ

1 ຕໍ່ໄປນີ້ເປັນສຸພາສິດຂອງໂຊໂລໂມນ ຊຶ່ງຄົນຂອງເຮເຊກີຢາ ກະສັດແຫ່ງຢູດາໄດ້ກ່າຍໄວ້
2 ສະຫງ່າລາສີຂອງພຣະເຈົ້າຄືການເຊື່ອງສິ່ງຕ່າງໆໄວ້
ແຕ່ກຽດຂອງກະສັດ ຄືການຄົ້ນຫາສິ່ງຕ່າງໆໃຫ້ປາກົດ

3 ຟ້າສະຫວັນສູງສັນໃດ ແລະແຜ່ນດິນໂລກເລິກສັນໃດ
ພະໄທຂອງກະສັດ ກໍເຫລືອຈະຮູ້ເຫັນສັນນັ້ນ
4 ຈົ່ງໄລ່ຂີ້ອອກໄປຈາກເງິນ
ແລ້ວຈຶ່ງຈະມີວັດຖຸສຳລັບຊ່າງເຮັດຂັນ
5 ຈົ່ງໄລ່ຄົນຊົ່ວຮ້າຍອອກໄປເສຍຈາກພະພັກກະສັດ
ແລະພະທີ່ນັ່ງຂອງພະອົງຈະສະຖາປະນາໄວ້ດ້ວຍຄວາມຊອບທຳ
6 ຢ່າເອົາຕົວເຈົ້າຂຶ້ນມາຕໍ່ພະພັກກະສັດ
ຫລືຢືນຢູ່ໃນບ່ອນຂອງຜູ້ຫລັກຜູ້ໃຫຍ່
7 ເພາະການທີ່ເພິ່ນຈະກ່າວວ່າ “ເຊີນຂຶ້ນມາບ່ອນນີ້”
ກໍດີກວ່າຖືກໄລ່ລົງໄປບ່ອນຕ່ຳຕ້ອຍຕໍ່ໜ້າເຈົ້ານາຍຜູ້ຊຶ່ງຕາຂອງເຈົ້າໄດ້ເຫັນ
8 ຢ່າຟ້າວນຳເຂົ້າມາຍັງສານ
ເພາະເມື່ອເພື່ອນບ້ານຂອງເຈົ້າເຮັດໃຫ້ເຈົ້າໄດ້ອັບອາຍແລ້ວ
ໃນທີ່ສຸດເຈົ້າຈະເຮັດຢ່າງໃດ
9 ຈົ່ງຕົກລົງເລື່ອງຂອງເຈົ້າກັບເພື່ອນບ້ານຂອງເຈົ້າ
ແລະຢ່າເຮັດໃຫ້ເຜີຍຄວາມລັບຂອງກັນແລະກັນ.
10 ຢ້ານວ່າຜູ້ທີ່ໄດ້ຍິນ ຈະນຳຄວາມອັບອາຍມາສູ່ເຈົ້າ
ແລະຊື່ສຽງຂອງເຈົ້າຈະມົວໝອງຢູ່ດົນ
11 ຖ້ອຍຄຳທີ່ເວົ້າຢ່າງເໝາະສົມຈະເປັນເໝືອນໝາກແອບເປີ້ນທອງຄຳໃນພາຊະນະເງິນ
12 ຄົນຕັກເຕືອນທີ່ສະຫລາດກັບຫູທີ່ເຊື່ອຟັງ
ກໍເປັນເໝືອນກັບແຫວນທອງຄຳ ຫລືເຄື່ອງເອ້ທອງຄຳເນື້ອດີ
13 ຫິມະໃຫ້ຄວາມເຢັນໃນລະດູເກັບກ່ຽວສັນໃດ
ຜູ້ສົ່ງຂ່າວທີ່ສັດຊື່ຍ່ອມເຮັດໃຫ້ຈິດວິນຍານຂອງນາຍຜູ້ໃຊ້ລາວຊຸ່ມຊື່ນສັນນັ້ນ
14 ຄົນທີ່ອວດວ່າຈະໃຫ້ຂອງຂວັນແຕ່ບໍ່ໄດ້ໃຫ້
ກໍເປັນເໝືອນດັ່ງເມກ ແລະລົມທີ່ບໍ່ມີຝົນ
15 ຄວາມພາກພຽນຈະຊັກນຳຜູ້ປົກຄອງໄດ້
ແລະລີ້ນທີ່ອ່ອນຫວານຈະເຮັດໃຫ້ກະດູກຫັກໄດ້
16 ເຈົ້າໄດ້ພົບນ້ຳເຜີ້ງແລ້ວບໍ ຈົ່ງກິນແຕ່ພໍດີ
ຢ້ານວ່າເຈົ້າຈະອີ່ມ ແລະຮາກອອກມາ
17 ຢ່າໃຫ້ຕີນຂອງເຈົ້າຢູ່ໃນເຮືອນເພື່ອນບ້ານຂອງເຈົ້າດົນໆ
ຢ້ານວ່າລາວຈະອິດເມື່ອຍເພາະເຈົ້າ ແລະກຽດຊັງເຈົ້າ
18 ຄົນໃດທີ່ເປັນພະຍານບໍ່ຈິງກ່າວໂທດເພື່ອນບ້ານຂອງຕົນ
ກໍເປັນເໝືອນດັ່ງກະບອງເສິກ ຫລືດາບ ຫລືລູກທະນູທີ່ຄົມ
19 ການວາງໃຈໃນຄົນທີ່ບໍ່ສັດຊື່ໃນຍາມລຳບາກ

ກໍເປັນເໝືອນດັ່ງແຂ້ວທີ່ຫັກແລ້ວ ຫລືຕີນທີ່ຫລຸດຈາກຂໍ້ຕໍ່
20 ບັນດາຄົນທີ່ຮ້ອງເພງໃຫ້ຄົນທຸກໃຈຟັງ
ກໍເປັນຄືກັບຄົນຖອດເຄື່ອງແຕ່ງກາຍອອກໃນມື້ທີ່ອາກາດໜາວ
ແລະເປັນຄືກັບການເອົານໍ້າສົ້ມມາຫົດເທິງຜົງໂສດາ
21 ຖ້າສັດຕູຂອງເຈົ້າຫິວ ຈົ່ງໃຫ້ອາຫານລາວຮັບປະທານ
ແລະຖ້າລາວກະຫາຍ ຈົ່ງໃຫ້ນໍ້າລາວດື່ມ
22 ເພາະເຈົ້າຈະກອງຖ່ານທີ່ລຸກກ້າໄວ້ເທິງຫົວຂອງລາວ
ແລະພຣະຜູ້ເປັນເຈົ້າຈະຊົງໃຫ້ບຳເໜັດແກ່ເຈົ້າ
23 ລົມເໜືອໄລ່ຝົນໄປສັນໃດ
ສີໜ້າທີ່ເຄືອງແຄ້ນກໍໄລ່ຕາມລີ້ນທີ່ເວົ້າຂວັນນິນທາໄປສັນນັ້ນ
24 ຢູ່ທີ່ມຸມເທິງຫລັງຄາເຮືອນ
ກໍດີກວ່າຢູ່ໃນເຮືອນກວ້າງຂວາງຮ່ວມກັບຍິງທີ່ມັກຜິດຖຽງກັນ
25 ຂ່າວດີຈາກເມືອງໄກ
ກໍເໝືອນກັບໃຫ້ນໍ້າເຢັນແກ່ຄົນທີ່ກະຫາຍ
26 ຄົນຊອບທຳທີ່ຍອມພ່າຍແພ້ແກ່ຄົນຊົ່ວຮ້າຍ
ກໍເປັນເໝືອນດັ່ງນໍ້າພຸທີ່ມີຂີ້ຕົມ ຫລືເປັນເໝືອນດັ່ງນໍ້າບໍ່ທີ່ເປິເປື້ອນ
27 ການກິນນໍ້າເຜີ້ງຫລາຍ ກໍບໍ່ດີ ສະນັ້ນ,
ຈຶ່ງເປັນການບໍ່ມີກຽດເມື່ອຄົນນັ້ນຊອກຫາກຽດສຳລັບຕົນເອງ
28 ຄົນທີ່ປາດສະຈາກການປົກຄອງຈິດໃຈຕົນເອງ
ກໍເປັນເໝືອນດັ່ງເມືອງທີ່ເພພັງ ແລະບໍ່ມີກຳແພງ

# ບົດທີ 26

## ທາງທັງຫລາຍຂອງຄົນໂງ່ຈ້າ ຄົນຂີ້ຄ້ານ ແລະຄົນສ້າງຄວາມຫຍຸ້ງຍາກ

1 ກຽດຕິຍົດບໍ່ເໝາະສົມກັບຄົນໂງ່
ເຊັ່ນດຽວກັນກັບຫິມະໃນລະດູຮ້ອນ ແລະຝົນໃນລະດູເກັບກ່ຽວ
2 ຄຳສາບແຊ່ງທີ່ຂາດເຫດຜົນຍ່ອມບໍ່ມາເກາະ
ເຊັ່ນດຽວກັນກັບນົກທີ່ກຳລັງບິນໄປມາ ແລະນົກນາງແອ່ນທີ່ກຳລັງບິນຢູ່
3 ແສ້ສຳລັບມ້າ ບັງຫຽນສຳລັບລາ
ແລະໄມ້ແສ້ສຳລັບຫລັງຄົນໂງ່
4 ຢ່າຕອບຄົນໂງ່ຕາມຄວາມໂງ່ຂອງລາວ
ຢ້ານວ່າເຈົ້າເອງຈະເປັນເໝືອນດັ່ງລາວ
5 ຈົ່ງຕອບຄົນໂງ່ຕາມຄວາມໂງ່ຂອງລາວ
ຢ້ານວ່າລາວຈະອວດສະຫລາດໃນສາຍຕາຂອງລາວເອງ

6 ຄົນທີ່ສົ່ງຂ່າວໄປກັບມືຂອງຄົນໂງ່
ກໍຕັດຕີນຂອງລາວເອງອອກ ແລະດື່ມຄວາມເສຍຫາຍ
7 ຄຳອຸປະມາທີ່ຢູ່ໃນປາກຂອງຄົນໂງ່
ກໍເປັນເໝືອນດັ່ງຂາຂອງຄົນພິການທີ່ບໍ່ເທົ່າກັນ
8 ຜູ້ທີ່ໃຫ້ກຽດແກ່ຄົນໂງ່
ກໍເໝືອນກັບຜູ້ທີ່ມັດກ້ອນຫີນໄວ້ກັບສາຍກະຖຸນ
9 ຄຳອຸປະມາທີ່ຢູ່ໃນປາກຂອງຄົນໂງ່
ກໍເປັນເໝືອນດັ່ງໜາມທີ່ຢູ່ໃນມືຄົນຂີ້ເມົາ
10 **ພຣະເຈົ້າ**ຍິ່ງໃຫຍ່
ຜູ້ຊຶ່ງສ້າງສິ່ງສາລະພັດໄດ້ຊົງໃຫ້ບຳເໜັດແກ່ທັງຄົນໂງ່ ແລະຄົນລະເມີດ
11 ຄົນໂງ່ທີ່ເຮັດຄວາມໂງ່ຊ້ຳແລ້ວຊ້ຳອີກ
ກໍເປັນເໝືອນດັ່ງໝາທີ່ກັບໄປຫາສິ່ງທີ່ມັນຮາກອອກມາ
12 ທ່ານເຫັນຄົນທີ່ຄິດວ່າຕົນເອງສະຫລາດແລ້ວບໍ
ຄວາມຫວັງໃນຄົນໂງ່ ກໍມີຫລາຍກວ່າຄົນເຊັ່ນນັ້ນ
13 ຄົນຂີ້ຄ້ານເວົ້າວ່າ “ມີໂຕສິງໃຫຍ່ຢູ່ຕາມຫົນທາງ”
14 ປະຕູຫັນໄປມາດ້ວຍບານພັບຂອງມັນສັນໃດ ຄົນຂີ້ຄ້ານ
ກໍເຮັດຢ່າງນັ້ນເທິງບ່ອນນອນຂອງລາວ
15 ຄົນຂີ້ຄ້ານເອົາມືຂອງລາວຈັບອາຫານ
ລາວອິດເມື່ອຍທີ່ຈະນຳມືກັບມາທີ່ປາກຂອງຕົນ
16 ຄົນຂີ້ຄ້ານເຫັນວ່າຕົນເອງສະຫລາດກວ່າຄົນເຈັດຄົນທີ່ຕອບໄດ້ຢ່າງຫລັກແຫລມ
17 ຄົນທີ່ກຳລັງຜ່ານໄປ ແລະເຂົ້າໄປຫຍຸ້ງກ່ຽວໃນການຜິດຖຽງກັນ
ຊຶ່ງບໍ່ແມ່ນເລື່ອງຂອງລາວເອງ ກໍເປັນເໝືອນດັ່ງຄົນຈັບຫູໝາ
18 ຄົນບ້າທີ່ໂຍນດັ້ນໄຟ ລູກທະນູ
ແລະຄວາມຕາຍອອກໄປ
19 ກໍເປັນເໝືອນກັບຄົນທີ່ຫລອກລວງເພື່ອນບ້ານຂອງຕົນ
ແລະກ່າວວ່າ “ຂ້າພະເຈົ້າຢອກຫລິ້ນເທົ່ານັ້ນ”
20 ບ່ອນໃດທີ່ບໍ່ມີຟືນ ໄຟກໍດັບ
ແລະບ່ອນໃດທີ່ບໍ່ມີຄົນນິນທາ ການຜິດຖຽງກັນກໍຢຸດໄປ
21 ຖ່ານເປັນເຊື້ອໄຟ ແລະຟືນເປັນເຊື້ອໄຟສັນໃດ
ຄົນທີ່ມັກຜິດຖຽງກັນກໍເປັນເຊື້ອການຜິດຖຽງກັນສັນນັ້ນ
22 ຖ້ອຍຄຳຂອງຄົນນິນທາ ກໍເປັນເໝືອນດັ່ງບາດແຜ
ມັນລົງໄປຍັງສ່ວນຕ່າງໆໃນຂອງຮ່າງກາຍ
23 ຮີມປາກທີ່ຮ້ອນຮົນກັບໃຈທີ່ຊົ່ວຮ້າຍ

ກໍເປັນເໝືອນດັ່ງຂີ້ເງິນຢູ່ເທິງພາຊະນະດິນ
24 ຄົນທີ່ກຽດຊັງຜູ້ອື່ນ ກໍປະຈົບປະແຈງດ້ວຍຮີມປາກຂອງຕົນ
ແລະເກັບຄວາມຫລອກລວງໄວ້ໃນໃຈ
25 ເມື່ອລາວເວົ້າລົມຢ່າງມ່ວນຊື່ນ ຢ່າເຊື່ອລາວ
ເພາະມີສິ່ງໜ້າກຽດຊັງເຈັດຢ່າງຢູ່ໃນໃຈຂອງລາວ
26 ເຖິງແມ່ນລາວຈະປິດຄວາມກຽດຊັງຂອງລາວໄວ້ດ້ວຍການຫລອກລວງ
ຄວາມຊົ່ວຮ້າຍຂອງລາວຈະເຜີຍອອກຕໍ່ໜ້າທີ່ປະຊຸມທັງໝົດ
27 ຄົນທີ່ຂຸດຂຸມ ລາວຈະຕົກລົງໄປເອງ ຜູ້ໃດໃຫ້ກ້ອນຫີນກິ້ງມາ
ມັນກໍຈະກັບໄປທັບລາວເອງ
28 ລີ້ນທີ່ຂີ້ຕົວະກຽດຊັງຜູ້ທີ່ມັນທຳລາຍ
ແລະປາກທີ່ຍ້ອງຍໍ ກໍພາໃຫ້ຈິບຫາຍ

# ບົດທີ 27

## ຄຳຕັກເຕືອນ ແລະຄຳສັ່ງສອນຕ່າງໆ

1 ຢ່າໂອ້ອວດເຖິງມື້ອື່ນ
ເພາະເຈົ້າບໍ່ຮູ້ວ່າວັນໜຶ່ງໆຈະນຳຫຍັງມາໃຫ້ແດ່
2 ຈົ່ງໃຫ້ຄົນອື່ນສັນເສີນເຈົ້າ
ແລະບໍ່ແມ່ນປາກຂອງເຈົ້າເອງ ໃຫ້ຄົນຕ່າງຖິ່ນສັນເສີນ ບໍ່ແມ່ນຮີມປາກຂອງເຈົ້າເອງ
3 ຫີນກໍໜັກ ແລະຊາຍກໍມີນໍ້າໜັກ
ແຕ່ຄວາມໂກດຮ້າຍຮ້າຍຂອງຄົນໂງ່ ກໍໜັກຫລາຍກວ່າທັງສອງຢ່າງນັ້ນ
4 ຄວາມພິໂລດ ກໍໂຫດຮ້າຍ ຄວາມຮ້າຍ ກໍຮຸນແຮງ
ແຕ່ໃຜຈະຢືນຢູ່ຕໍ່ໜ້າຄວາມອິດສາໄດ້
5 ເວົ້າກັນຕໍ່ໜ້າດີກວ່າຮັກກັນແບບລັບໆ
6 ບາດແຜທີ່ມິດສະຫາຍເຮັດ
ກໍສັດຊື່ ແຕ່ການຈູບຂອງສັດຕູນັ້ນ ກໍຫລອກລວງ
7 ຄົນທີ່ອີ່ມແລ້ວ ຮັງເຜີ້ງກໍໜ້າເບື່ອ
ແຕ່ສຳລັບຜູ້ທີ່ຫິວ ທຸກສິ່ງທີ່ຂົມ ກໍວ່າຫວານ
8 ຄົນທີ່ເວີ່ນໄປຈາກເຮືອນຂອງຕົນ
ກໍເປັນເໝືອນນົກທີ່ເວີ່ນໄປຈາກຮັງຂອງມັນ
9 ນໍ້າມັນ ແລະນໍ້າຫອມເຮັດໃຫ້ໃຈຍິນດີ
ແລະຄຳເຕືອນສະຕິອັນອ່ອນຫວານຂອງເພື່ອນ ກໍພາໃຫ້ຊື່ນໃຈ
10 ຢ່າປະຖິ້ມມິດສະຫາຍຂອງເຈົ້າ ແລະມິດຂອງພໍ່ເຈົ້າ
ແລະຢ່າເຂົ້າໄປໃນເຮືອນພີ່ນ້ອງຂອງເຈົ້າໃນມື້ຍາກລຳບາກຂອງເຈົ້າ

ເພາະເພື່ອນບ້ານທີ່ຢູ່ໃກ້ ກໍດີກວ່າພີ່ນ້ອງທີ່ຢູ່ຫ່າງໄກ
11 ລູກຊາຍຂອງເຮົາເອີຍ ຈົ່ງສະຫລາດ ແລະເຮັດໃຈຂອງເຮົາໃຫ້ຍິນດີ
ເພື່ອເຮົາຈະຕອບຄົນທີ່ຕຳໜິເຮົາໄດ້
12 ຄົນຮອບຮູ້ເຫັນອັນຕະລາຍ ແລະເຊື່ອງຕົວລາວເສຍ
ແຕ່ຄົນໂງ່ຍ່າງເລື້ອຍໄປ ແລະຮັບໂທດ
13 ຈົ່ງຈັບເສື້ອຜ້າຂອງລາວໄວ້ ເມື່ອລາວໄດ້ປະກັນໃຫ້ຄົນອື່ນ
ແລະຍຶດຕົວລາວໄວ້ ເມື່ອລາວຮັບປະກັນຍິງຕ່າງດ້າວ
14 ຄົນທີ່ຕື່ນແຕ່ເຊົ້າມືດໄປອວຍພອນເພື່ອນບ້ານດ້ວຍສຽງດັງ
ແລ້ວລາວຈະເຫັນວ່າເປັນຄຳສາບແຊ່ງ
15 ຝົນຍ້ອຍຢູ່ບໍ່ຢຸດໃນມື້ທີ່ຝົນຕົກສັນໃດ
ຜູ້ຍິງທີ່ມັກການຜິດຖຽງກັນ ກໍຄືກັນສັນນັ້ນ
16 ການຈະຫ້າມນາງ ກໍເປັນເໝືອນດັ່ງຫ້າມລົມ
ຫລືກຳນ້ຳມັນດ້ວຍມືຂວາ
17 ເຫລັກລັບເຫລັກໃຫ້ແຫລມຄົມໄດ້
ຄົນຜູ້ໜຶ່ງກໍຂັດເກົາເພື່ອນຂອງຕົນໄດ້
18 ຄົນທີ່ເບິ່ງແຍງຕົ້ນໝາກເດື່ອຈະໄດ້ກິນຜົນຂອງມັນ
ແລະຄົນທີ່ຄຸ້ມຄອງນາຍຂອງຕົນຈະໄດ້ຮັບກຽດ
19 ໃນນ້ຳຄົນເຫັນໜ້າຄົນສັນໃດ
ຈິດໃຈຂອງຄົນກໍສໍ່ຄົນສັນນັ້ນ
20 ນາລົກ ແລະແດນມໍລະນາບໍ່ຮູ້ຈັກອີ່ມ
ຕາຂອງຄົນເຮົາກໍບໍ່ຮູ້ຈັກອີ່ມເຊັ່ນກັນ
21 ກະປຸກມີໄວ້ສຳລັບເງິນ ເຕົາຫລອມໂລຫະມີໄວ້ສຳລັບທອງຄຳ
ຄຳສັນເສີນຂອງຄົນຈະພິສູດຄົນ
22 ເຖິງແມ່ນເຈົ້າຈະເອົາຄົນໂງ່ໃສ່ຄົກຕຳດ້ວຍສາກພ້ອມກັບເຂົ້າສາລີ
ຄວາມໂງ່ຈ້າຂອງລາວກໍຍັງບໍ່ຫວິດຈາກລາວ
23 ຈົ່ງຮູ້ຄວາມທຸກສຸກຂອງຝູງແບ້ແກະຂອງເຈົ້າໃຫ້ດີ
ແລະຈົ່ງເອົາໃຈໃສ່ຝູງງົວຂອງເຈົ້າ
24 ເພາະຄວາມຮັ່ງມີບໍ່ໄດ້ທົນຢູ່ເປັນນິດ
ແລະມົງກຸດຈະທົນຢູ່ໄດ້ທຸກຊົ່ວອາຍຸບໍ
25 ຫຍ້າແຫ້ງປາກົດແລ້ວ ແລະຫຍ້າງອກໃໝ່ກໍປາກົດຂຶ້ນມາ
ແລະພວກເຂົາເກັບຜັກຫຍ້າຕ່າງໆຢູ່ຕາມພູເຂົາແລ້ວ
26 ລູກແກະຈະໃຫ້ເສື້ອຜ້າແກ່ເຈົ້າ
ແລະແບ້ກໍຈະເປັນຄ່ານາ

27 ແລະເຈົ້າຈະມີນົມແບ້ເປັນອາຫານແກ່ເຈົ້າພຽງພໍ
ທັງເປັນອາຫານແກ່ຄົວເຮືອນຂອງເຈົ້າ ແລະສາວໃຊ້ຂອງເຈົ້າ

# ບົດທີ 28

## ບຳເໜັດຕ່າງໆຂອງຄົນຊອບທຳ

1 ຄົນຊົ່ວຮ້າຍກໍໜີ ເມື່ອບໍ່ມີໃຜໄລ່ຕາມ
ແຕ່ຄົນຊອບທຳ ກໍກ້າຫານເໝືອນດັ່ງໂຕສິງໃຫຍ່
2 ເມື່ອແຜ່ນດິນລະເມີດ ກໍມີຜູ້ຄອບຄອງເພີ່ມຂຶ້ນ
ແຕ່ດ້ວຍຄົນທີ່ມີຄວາມເຂົ້າໃຈ ແລະຄວາມຮູ້
ສະຖານະພາບຂອງແຜ່ນດິນນັ້ນຈະຍືນຍາວ
3 ຄົນຍາກຈົນທີ່ບີບບັງຄັບຄົນຍາກຈົນ ກໍເປັນເໝືອນດັ່ງຝົນທີ່ຊັດລົງມາ
ແຕ່ບໍ່ໃຫ້ອາຫານ
4 ບັນດາຜູ້ທີ່ປະຖິ້ມພຣະບັນຍັດ ຍ່ອມສັນເສີນຄົນຊົ່ວຮ້າຍ
ແຕ່ບັນດາຜູ້ທີ່ຮັກສາພຣະບັນຍັດ ຍ່ອມຄອຍຖ້າຕໍ່ສູ້ພວກເຂົາ
5 ຄົນຊົ່ວຮ້າຍບໍ່ເຂົ້າໃຈຄວາມຍຸດຕິທຳ
ແຕ່ບັນດາຜູ້ທີ່ສະແຫວງຫາພຣະຜູ້ເປັນເຈົ້າເຂົ້າໃຈສິ່ງສາລະພັດ
6 ຄົນຍາກຈົນທີ່ດຳເນີນໃນຄວາມທ່ຽງທຳຂອງຕົນ
ກໍດີກວ່າຄົນຮັ່ງມີທີ່ຄົດໂກງໃນທາງຂອງຕົນ
7 ຄົນທີ່ຮັກສາພຣະບັນຍັດ ກໍເປັນລູກຊາຍທີ່ສະຫລາດ
ແຕ່ເພື່ອນຂອງຄົນໂລພາ ກໍນຳຄວາມອັບອາຍມາເຖິງພໍ່ຂອງລາວ
8 ຄົນທີ່ເພີ່ມຊັບສົມບັດຂອງຕົນດ້ວຍດອກເບ້ຍ ແລະເງິນເພີ່ມ
ພຣະເຈົ້າຈະຊິງເອົາຊັບນັ້ນໄປຈາກລາວ
ເພື່ອເພີ່ມແກ່ຄົນທີ່ຈະເມດຕາຄົນຍາກຈົນ
9 ຖ້າຜູ້ໃດຫັນໃບຫູໄປຈາກການຟັງພຣະບັນຍັດ
ແມ່ນຄຳອະທິຖານຂອງລາວ ກໍຍັງເປັນສິ່ງໜ້າກຽດຊັງ
10 ບຸກຄົນຜູ້ນຳຄົນຊອບທຳເຂົ້າໄປໃນທາງຊົ່ວ
ກໍຈະຕົກລົງໃນຂຸມຂອງລາວເອງ
ແຕ່ຄົນທ່ຽງທຳຈະມີສິ່ງຂອງຢ່າງດີ
11 ຄົນຮັ່ງມີ ກໍສະຫລາດໃນສາຍຕາຂອງຕົນເອງ
ແຕ່ຄົນຍາກຈົນທີ່ມີຄວາມເຂົ້າໃຈ ກໍຈະຮູ້ຈັກລາວເອງຢ່າງແຈ່ມແຈ້ງ
12 ເມື່ອຄົນຊອບທຳຊື່ນຊົມຍິນດີ ຄວາມຮຸ່ງເຮືອງກໍມີຫລາຍຂຶ້ນ
ແຕ່ເມື່ອຄົນຊົ່ວຮ້າຍທະວີອຳນາດ ຄົນກໍພາກັນເຊື່ອງຕົວເສຍ
13 ຄົນທີ່ເຊື່ອງຄວາມບາບຂອງຕົນຈະບໍ່ຈະເລີນ

ແຕ່ຄົນທີ່ສາລະພາບ ແລະຖິ້ມຄວາມຊົ່ວເສຍຈະໄດ້ຄວາມກະລຸນາ
14 ຄົນທີ່ຢຳເກງຢູ່ສະເໝີ ກໍເປັນສຸກ
ແຕ່ຄົນທີ່ເຮັດໃຈຂອງຕົນໃຫ້ກະດ້າງ ກໍຈະຕົກຢູ່ໃນຄວາມລຳບາກ
15 ຜູ້ປົກຄອງທີ່ຊົ່ວຮ້າຍເໜືອຄົນຍາກຈົນ ກໍເປັນເໝືອນດັ່ງໂຕສິງໃຫຍ່ຄຳລາມ
ຫລືໝີທີ່ກຳລັງເຂົ້າຕໍ່ສູ້
16 ຜູ້ປົກຄອງທີ່ຂາດຄວາມເຂົ້າໃຈ ກໍເປັນຜູ້ບີບບັງຄັບທີ່ໂຫດຮ້າຍ
ແຕ່ຄົນທີ່ກຽດຊັງຄວາມໂລບ ຍ່ອມຍືດປີເດືອນຂອງລາວອອກໄປ
17 ຄົນໃດທີ່ເຮັດຮຸນແຮງເລື່ອງເລືອດຂອງຄົນອື່ນ
ຄົນນັ້ນກໍເປັນຄົນຫລົບໜີຢູ່ຈົນລົງໄປສູ່ປາກແດນ ຢ່າໃຫ້ໃຜຈັບລາວເລີຍ
18 ຄົນທີ່ດຳເນີນໃນຄວາມທ່ຽງທຳຈະໄດ້ຮັບການຊ່ວຍໃຫ້ລອດພົ້ນ
ແຕ່ຄົນທີ່ມີເລ່ກົນ ທາງທັງຫລາຍຂອງລາວເອງຈະຕົກທັນທີ
19 ຄົນທີ່ໄຖໄຮ່ນາຂອງຕົນຈະໄດ້ອາຫານຢ່າງຫລວງຫລາຍ
ແຕ່ຜູ້ທີ່ຕິດຕາມຄົນບໍ່ມີຄ່າ ກໍຈະຍິ່ງຈົນລົງ
20 ຄົນທີ່ສັດຊື່ຈະໄດ້ຮັບພອນຢ່າງຫລວງຫລາຍ
ແຕ່ຜູ້ທີ່ຮີບຮ້ອນຮັ່ງມີ ຈະບໍ່ມີໂທດກໍເປັນໄປບໍ່ໄດ້
21 ການຈະເຫັນແກ່ໜ້າຄົນໃດກໍບໍ່ດີ
ຄົນນັ້ນອາດຈະລະເມີດເພາະອາຫານພຽງເລັກນ້ອຍກໍເປັນໄດ້
22 ຄົນທີ່ຊອກຫາຊັບສົມບັດກໍມີສາຍຕາຊົ່ວ
ແລະບໍ່ຮູ້ວ່າຄວາມຂັດສົນຈະມາເຖິງລາວ
23 ຄົນທີ່ຕິຕຽນຄົນໜຶ່ງຄົນໃດ
ພາຍຫລັງລາວຈະໄດ້ຮັບຄຳຊົມເຊີຍຫລາຍກວ່າຄົນທີ່ຍ້ອງຍໍດ້ວຍລີ້ນຂອງຕົນ
24 ບຸກຄົນທີ່ລັກເຄື່ອງຂອງພໍ່ ຫລືແມ່ຂອງຕົນ ແລະກ່າວວ່າ “ຢ່າງນີ້ ບໍ່ລະເມີດ”
ລາວກໍເປັນເພື່ອນກັບຄົນທຳລາຍ
25 ຄົນໃຈຈອງຫອງເຮັດໃຫ້ເກີດການຜິດຖຽງກັນ
ແຕ່ຜູ້ທີ່ວາງໃຈໃນ **ພຣະຜູ້ເປັນເຈົ້າ** ຈະຈະເລີນຂຶ້ນ
26 ຄົນທີ່ວາງໃຈໃນຈິດໃຈຂອງຕົນເອງ ກໍເປັນຄົນໂງ່
ແຕ່ຄົນທີ່ດຳເນີນໃນປັນຍາຈະໄດ້ຮັບການຊ່ວຍໃຫ້ພົ້ນ
27 ຄົນທີ່ໃຫ້ແກ່ຄົນຍາກຈົນຈະບໍ່ຮູ້ຈັກການຂັດສົນ
ແຕ່ຄົນທີ່ປິດຕາຂອງຕົນຈາກການນີ້ຈະໄດ້ຮັບຄຳສາບແຊ່ງຫລາຍ
28 ເມື່ອຄົນຊົ່ວຮ້າຍມີອຳນາດຂຶ້ນ ຄົນກໍໄດ້ເຊື່ອງຕົວ
ແຕ່ເມື່ອພວກເຂົາທັງຫລາຍຕາຍໄປ ຄົນຊອບທຳກໍເພີ່ມຂຶ້ນ

# ບົດທີ 29

## ຄົນສະຫລາດປຽບທຽບກັບຄົນໂງ່ຈ້າ

[1] ຄົນທີ່ຖືກຕັກເຕືອນເລື້ອຍໆ ແຕ່ຍັງແຂງກະດ້າງ
ຈັກໜ້ອຍຈະຖືກທຳລາຍ ຈຶ່ງຮັກສາບໍ່ໄດ້
[2] ເມື່ອຄົນຊອບທຳທະວີອຳນາດ ປະຊາຊົນກໍຍິນດີ
ແຕ່ເມື່ອຄົນຊົ່ວຮ້າຍຄອບຄອງ ປະຊາຊົນກໍຮ້ອງຄາງ
[3] ຜູ້ທີ່ຮັກປັນຍາຍ່ອມເຮັດໃຫ້ພໍ່ຂອງລາວຍິນດີ
ແຕ່ຜູ້ທີ່ຄົບຄ້າກັບຍິງເພດສະຫຍາ ກໍຜານຊັບສິ່ງຂອງຂອງຕົນ
[4] ກະສັດຊົງໃຫ້ຄວາມໝັ້ນຄົງແກ່ແຜ່ນດິນດ້ວຍຄວາມຍຸດຕິທຳ
ແຕ່ອົງທີ່ຊົງຮັບຂອງກຳນັນ ກໍເຮັດໃຫ້ແຜ່ນດິນພັງທະລາຍ
[5] ຄົນທີ່ປະຈົບປະແຈງເພື່ອນບ້ານຂອງຕົນຍ່ອມກາງຕາຂ່າຍໄວ້ດັກຈັບຕີນຂອງລາວ
[6] ຄົນຊົ່ວຕິດກັບດັກຢູ່ໃນການລະເມີດຂອງຕົນ
ແຕ່ຄົນຊອບທຳຮ້ອງເພງ ແລະຊົມຊື່ນຍິນດີ
[7] ຄົນຊອບທຳຮູ້ຈັກສິດທິຂອງຄົນຍາກຈົນ
ແຕ່ຄົນຊົ່ວຮ້າຍບໍ່ເຂົ້າໃຈຄວາມຮູ້ຢ່າງນີ້
[8] ຄົນມັກເຍາະເຍີ້ຍເຮັດບ້ານເມືອງໃຫ້ຖືກບ້ວງແຮ້ວ
ແຕ່ນັກປາດປ່ຽນຄວາມໂຫດຮ້າຍໄປເສຍ
[9] ຖ້ານັກປາດມີເລື່ອງໂຕ້ຖຽງກັບຄົນໂງ່ ບໍ່ວ່າລາວຈະຮຸນແຮງ
ຫລືຍິ້ມຫົວ ກໍບໍ່ມີວັນສະຫງົບລົງໄດ້
[10] ຄົນທີ່ກະຫາຍເລືອດຍ່ອມກຽດຊັງຄົນທ່ຽງທຳ
ແຕ່ຄົນຊອບທຳສະແຫວງຫາຊີວິດຂອງຕົນ
[11] ຄົນໂງ່ຍ່ອມໃຫ້ຄວາມຄິດຂອງຕົນພຸ່ງອອກມາເຕັມທີ່
ແຕ່ນັກປາດຮູ້ຫ້າມຄວາມຄິດໄວ້ຈົນພາຍຫລັງ
[12] ຖ້າຜູ້ປົກຄອງເຊື່ອຟັງຄວາມບໍ່ຈິງ
ຂ້າລາຊະການຂອງເພິ່ນກໍຈະຊົ່ວຮ້າຍທັງໝົດ
[13] ຄົນຍາກຈົນ ແລະຄົນຫລອກລວງມັກມາປະເຊີນໜ້າກັນສະເໝີ
ແລະ **ພຣະ**ຜູ້ເປັນເຈົ້າປະທານຄວາມສະຫວ່າງແກ່ຕາຂອງຄົນທັງສອງ
[14] ກະສັດທີ່ພິພາກສາຄົນຍາກຈົນດ້ວຍຄວາມສັດຊື່
ພະທີ່ນັ່ງຂອງພະອົງຈະຕັ້ງຢູ່ເປັນນິດ
[15] ໄມ້ແສ້ ແລະຄຳຕັກເຕືອນເຮັດໃຫ້ເກີດປັນຍາ
ແຕ່ຖ້າປ່ອຍເດັກນ້ອຍໄວ້ແຕ່ຜູ້ດຽວ ກໍຈະນຳຄວາມອັບອາຍມາສູ່ແມ່ຂອງຕົນ
[16] ເມື່ອຄົນຊົ່ວຮ້າຍເພີ່ມພູນ ການລະເມີດກໍທະວີຂຶ້ນ
ແຕ່ຄົນຊອບທຳຈະເບິ່ງຄວາມຫລົ້ມຈົມຂອງພວກເຂົາ

17 ຈົ່ງຝຶກສອນລູກຊາຍຂອງເຈົ້າ ແລະລາວຈະໃຫ້ເຈົ້າໄດ້ຢຸດພັກ
ເອີ ລາວຈະໃຫ້ຄວາມປິຕິຍິນດີແກ່ໃຈຂອງເຈົ້າ
18 ບ່ອນໃດທີ່ບໍ່ມີນິມິດ ປະຊາຊົນກໍຈິບຫາຍ
ແຕ່ຄົນທີ່ຮັກສາພຣະບັນຍັດຈະເປັນສຸກ
19 ພຽງແຕ່ໃຊ້ຄຳເວົ້າເທົ່ານັ້ນຈະຝຶກສອນຄົນໃຊ້ບໍ່ໄດ້
ເພາະເຖິງແມ່ນລາວເຂົ້າໃຈ ແຕ່ລາວກໍຈະບໍ່ຕອບ
20 ເຈົ້າເຫັນຄົນທີ່ປາກໄວບໍ
ຄວາມຫວັງໃນຄົນໂງ່ ກໍມີຫລາຍກວ່າລາວ
21 ຄົນທີ່ຖະໜອມຮັກຄົນໃຊ້ຂອງຕົນຕັ້ງແຕ່ເດັກນ້ອຍ
ໃນທີ່ສຸດຈະເຫັນວ່າລາວກາຍເປັນລູກຊາຍຂອງຕົນ
22 ຄົນທີ່ໂມໂຫງ່າຍຍ່ອມພາໃຫ້ເກີດການຜິດຖຽງກັນ
ແລະຄົນທີ່ມັກຮ້າຍ ກໍເປັນເຫດໃຫ້ມີການລະເມີດຫລາຍຂຶ້ນ
23 ຄວາມຈອງຫອງຂອງຄົນນຳລາວໃຫ້ຕ່ຳລົງ
ແຕ່ຄົນທີ່ມີໃຈຖ່ອມຈະໄດ້ຮັບກຽດ
24 ຜູ້ເຂົ້າສ່ວນກັບຄົນຂີ້ລັກ ກໍກຽດຊັງຊີວິດຂອງຕົນ
ລາວໄດ້ຍິນຄຳສາບແຊ່ງ ແຕ່ບໍ່ເປີດເຜີຍຫຍັງເລີຍ
25 ການຢ້ານກົວຄົນທີ່ວາງບ້ວງແຮ້ວໄວ້
ແຕ່ບຸກຄົນທີ່ວາງໃຈໃນພຣະຜູ້ເປັນເຈົ້າກໍຈະປອດໄພ
26 ຄົນເປັນຈຳນວນຫລາຍສະແຫວງຫາຄວາມພໍໃຈຈາກຜູ້ປົກຄອງ
ແຕ່ທຸກຄົນຈະໄດ້ຄວາມຍຸດຕິທຳຈາກພຣະຜູ້ເປັນເຈົ້າ
27 ຄົນບໍ່ຍຸດຕິທຳເປັນທີ່ກຽດຊັງແກ່ຄົນຍຸດຕິທຳ
ແຕ່ຄົນທ່ຽງທຳໃນທາງຂອງລາວກັບເປັນທີ່ກຽດຊັງແກ່ຄົນຊົ່ວຮ້າຍ

# ບົດທີ 30

## ຖ້ອຍຄຳຂອງອາກູ

1ຖ້ອຍຄຳຂອງອາກູ ລູກຊາຍຢາເກ ຄືຄຳທຳນວາຍຂອງລາວ. ຊາຍຄົນນັ້ນເວົ້າກັບອີທີ-
ເອນ ກັບອີທີເອນ ແລະອູການ ວ່າ
2 ແທ້ຈິງແລ້ວ ຂ້າພະເຈົ້າກໍໂງ່ຫລາຍກວ່າຄົນ
ຂ້າພະເຈົ້າບໍ່ມີຄວາມເຂົ້າໃຈຢ່າງມະນຸດ
3 ຂ້າພະເຈົ້າບໍ່ເຄີຍຮຽນຮູ້ປັນຍາ
ທັງບໍ່ມີຄວາມຮູ້ຂອງອົງຜູ້ບໍລິສຸດ
4 ໃຜແດ່ ໄດ້ຂຶ້ນໄປຍັງສະຫວັນ ຫລືລົງມາ
ໃຜແດ່ ໄດ້ຮວບຮວມລົມໄວ້ໃນກຳມືຂອງເພິ່ນ

ໃຜແດ່ ໄດ້ເອົາເຄື່ອງແຕ່ງກາຍຫໍ່ນໍ້າໄວ້
ໃຜແດ່ ໄດ້ສະຖາປະນາທີ່ສຸດປາຍແຫ່ງແຜ່ນດິນໂລກໄວ້
ນາມຂອງຜູ້ນັ້ນວ່າແນວໃດ
ແລະນາມລູກຊາຍຂອງຜູ້ນັ້ນວ່າແນວໃດ ຖ້າທ່ານບອກໄດ້
5 ພຣະທຳທຸກຄຳຂອງ ພຣະເຈົ້າ ນັ້ນກໍບໍລິສຸດ
ພຣະອົງຊົງເປັນໂລ່ແກ່ບັນດາຜູ້ທີ່ວາງໃຈໃນພຣະອົງ
6 ຢ່າເພີ່ມຫຍັງເຂົ້າກັບພຣະທຳຂອງພຣະອົງ
ຢ້ານວ່າພຣະອົງຈະຊົງຕຳໜິຕິຕຽນເຈົ້າ ແລະຈະເຫັນວ່າເຈົ້າເປັນຄົນຂີ້ຕົວະ
7 ຂ້າພະອົງຂໍສອງສິ່ງຈາກພຣະອົງ
ຂໍຢ່າຊົງປະຕິເສດທີ່ຈະໃຫ້ຂ້າພະອົງກ່ອນຂ້າພະອົງຕາຍ
8 ຂໍໃຫ້ຄວາມບໍ່ມີປະໂຫຍດ
ແລະຄວາມຂີ້ຕົວະໄກອອກຈາກຂ້າພະອົງ
ຂໍຢ່າປະທານຄວາມຍາກຈົນ ຫລືຄວາມຮັ່ງມີແກ່ຂ້າພະອົງ
ຂໍລ້ຽງຂ້າພະອົງດ້ວຍອາຫານທີ່ພໍດີແກ່ຂ້າພະອົງ
9 ຢ້ານວ່າຂ້າພະອົງຈະອີ່ມ ແລະປະຕິເສດພຣະອົງ
ແລ້ວເວົ້າວ່າ “ພຣະຜູ້ເປັນເຈົ້າ ແມ່ນຜູ້ໃດ”
ຫລືຢ້ານວ່າຂ້າພະອົງຈະຍາກຈົນ
ແລະລັກຂະໂມຍ ແລະອອກພຣະນາມ ພຣະເຈົ້າ ຂອງຂ້າພະອົງຢ່າງບໍ່ມີຄ່າ
10 ຢ່າກ່າວຫາຄົນໃຊ້ໃຫ້ນາຍຂອງລາວຟັງ
ຢ້ານວ່າລາວຈະສາບແຊ່ງເຈົ້າ ແລະເຈົ້າຈະຕ້ອງມີຄວາມຜິດ
11 ມີຄົນອີກລຸ້ນໜຶ່ງ ທີ່ສາບແຊ່ງພໍ່ຂອງຕົນ
ແລະບໍ່ອວຍພອນແມ່ຂອງຕົນ
12 ມີຄົນອີກລຸ້ນໜຶ່ງ ທີ່ບໍລິສຸດໃນສາຍຕາຂອງຕົນເອງ
ແຕ່ຍັງບໍ່ໄດ້ຮັບການຊຳລະສິ່ງເປິເປື້ອນຂອງຕົນເລີຍ
13 ມີຄົນອີກລຸ້ນໜຶ່ງ ຕາຂອງລາວສູງແທ້ໆ
ແລະໜັງຕາຂອງລາວສູງຫລາຍ
14 ມີຄົນອີກລຸ້ນໜຶ່ງ ທີ່ມີແຂ້ວເປັນດາບ ຄາງກະໄຕຂອງພວກເຂົາເປັນມີດ
ເພື່ອຈະກືນກິນຄົນຍາກຈົນເສຍຈາກແຜ່ນດິນໂລກ
ແລະຄົນຂັດສົນເສຍຈາກທ່າມກາງມະນຸດ
15 ໂຕປີງມີລູກໂຕແມ່ສອງໂຕ ມັນຮ້ອງວ່າ “ໃຫ້ ໃຫ້”
ແຕ່ສາມສິ່ງນີ້ບໍ່ເຄີຍອີ່ມ ເອີ ສິ່ງທີສີ່ກໍບໍ່ເຄີຍເວົ້າວ່າ “ພໍແລ້ວ”
16 ຄືແດນຄົນຕາຍ ມົດລູກຂອງຍິງໝັນ ແຜ່ນດິນໂລກທີ່ບໍ່ອີ່ມນໍ້າ
ແລະໄຟທີ່ບໍ່ເຄີຍເວົ້າວ່າ “ພໍແລ້ວ”

17 ໃນຕາທີ່ເຍາະເຍີ້ຍພໍ່ ແລະໝິ່ນປະໝາດບໍ່ຟັງແມ່ຈະຖືກກາແຫ່ງຮ່ອມພູຈິກອອກ
ແລະນົກອິນຊີໜຸ່ມຈະກິນເສຍ
18 ມີສາມສິ່ງທີ່ປະຫລາດຫລາຍສຳລັບຂ້າພະເຈົ້າ
ເອີ ສິ່ງທີສີ່ທີ່ຂ້າພະເຈົ້າບໍ່ເຂົ້າໃຈ
19 ຄືທ່າທີຂອງນົກອິນຊີໃນຟ້າ ທ່າທີຂອງງູເທິງຫີນ
ທ່າທີຂອງເຮືອໃນທ້ອງທະເລ ແລະທ່າທີຂອງຊາຍກັບຍິງ
20 ອັນນີ້ເປັນທາງຂອງຍິງຜູ້ລ່ວງປະເວນີຄື
ນາງຮັບປະທານ ແລະນາງເຊັດປາກ ແລະເວົ້າວ່າ “ຂ້ອຍບໍ່ໄດ້ເຮັດຜິດ”
21 ແຜ່ນດິນໂລກສັ່ນສະເທືອນຢູ່ໃຕ້ສາມສິ່ງ
ເອີ ມັນທົນຢູ່ໃຕ້ສິ່ງທີສີ່ບໍ່ໄດ້
22 ຄືຂ້າທາດເມື່ອໄດ້ເປັນກະສັດ
ຄົນໂງ່ເມື່ອກິນອີ່ມ
23 ເມື່ອຍິງທີ່ໜ້າກຽດຊັງໄດ້ຜົວ
ແລະສາວໃຊ້ທີ່ໄດ້ເປັນນາຍແທນນາຍຍິງຂອງຕົນ
24 ມີສີ່ສິ່ງໃນແຜ່ນດິນໂລກທີ່ນ້ອຍເຫລືອເກີນ
ແຕ່ມີປັນຍາຫລາຍເຫລືອລົ້ນ
25 ມົດ ເປັນປະຊາຊົນທີ່ບໍ່ແຂງແຮງ
ແຕ່ມັນຍັງຕຽມອາຫານຂອງມັນໄວ້ໃນລະດູແລ້ງ
26 ໂຕຕຸ່ນ ເປັນປະຊາຊົນທີ່ບໍ່ມີກຳລັງ
ແຕ່ມັນຍັງສ້າງເຮືອນຂອງມັນໃນໂງ່ນຫີນໄດ້
27 ຕັກກະແຕນບໍ່ມີກະສັດ
ແຕ່ມັນຍັງຍ່າງຂະບວນເປັນແຖວ
28 ແມງມຸມ ເຈົ້າເອົາມືຈັບໄດ້
ແຕ່ມັນຍັງຢູ່ໃນພະລາຊະວັງ
29 ມີສາມສິ່ງທີ່ສະຫງ່າງາມຫລາຍໃນທ່າຍ່າງ
ເອີ ສິ່ງທີສີ່ ທ່າຍາງຂອງມັນກໍສະຫງ່າຜ່າເຜີຍ
30 ຄືໂຕສິງໃຫຍ່ ຊຶ່ງເປັນສັດທີ່ມີກຳລັງຫລາຍທີ່ສຸດ
ແລະບໍ່ຍອມຫັນຫລັງກັບເພາະສິ່ງໃດເລີຍ
31 ໝາລ່າເນື້ອ ແບ້ຜູ້
ແລະກະສັດ ຜູ້ຊຶ່ງບໍ່ມີໃຜກໍ່ການກະບົດໄດ້
32 ຖ້າເຈົ້າເປັນຄົນໂງ່ຍົກຍ້ອງຕົນເອງ
ຫລືຄິດແຜນການຊົ່ວຮ້າຍ ຈົ່ງເອົາມືອັດປາກຂອງເຈົ້າສາ
33 ເພາະເມື່ອກວນນໍ້ານົມ ກໍໄດ້ເນີຍແຫລວ ເມື່ອບີບດັງ ກໍໄດ້ເລືອດ

ແລະເມື່ອກວນໂມໂຫ ກໍໄດ້ການຜິດຖຽງກັນ

# ບົດທີ 31

## ຖ້ອຍຄຳຂອງກະສັດເລມູເອນ

1ຖ້ອຍຄຳຂອງກະສັດ ເລມູເອນ ຄືຄຳພະຍາກອນທີ່ພະມານດາໄດ້ສອນໄວ້ແກ່ພຣະອົງ
2 ມີຫຍັງອີກບໍ ລູກແມ່ເອີຍ ມີຫຍັງອີກບໍ ລູກແຫ່ງທ້ອງແມ່ເອີຍ
ມີຫຍັງອີກບໍ ລູກແຫ່ງຄຳປະຕິຍານຂອງແມ່ເອີຍ
3 ຢ່າໃຫ້ກຳລັງຂອງເຈົ້າແກ່ຜູ້ຍິງ
ຢ່າໃຫ້ທາງຂອງເຈົ້າແກ່ຜູ້ທຳລາຍກະສັດໃດໆ
4 ໂອເລມູເອນ ເອີຍ ບໍ່ສົມຄວນທີ່ກະສັດຈະສະເຫວີຍເຫລົ້າອະງຸ່ນ
ຫລືຜູ້ປົກຄອງຈະດື່ມເຫລົ້າ
5 ຢ້ານວ່າພວກເຂົາຈະດື່ມ ແລະລືມຄຳທີ່ສັ່ງອອກເປັນກົດໝາຍນັ້ນ
ແລະພິຈາລະນາຄວາມຂອງເຈົ້າທຸກໃຫ້ໂອນອຽງໄປ
6 ຈົ່ງໃຫ້ເຫລົ້າແກ່ຜູ້ທີ່ກຳລັງຈະຈິບຫາຍ
ແລະນ້ຳອະງຸ່ນແກ່ຜູ້ທີ່ທຸກໃຈຢ່າງຂົມຂື່ນ
7 ຈົ່ງໃຫ້ລາວດື່ມ ແລະລືມຄວາມຍາກຈົນຂອງລາວ
ເພື່ອຈະຈົດຈຳຄວາມທຸກລະທົມຂອງລາວບໍ່ໄດ້ອີກຕໍ່ໄປ
8 ຈົ່ງອ້າປາກຂອງເຈົ້າແທນຄົນປາກກືກ
ເພື່ອສິດທິຂອງທຸກຄົນທີ່ຖືກຖິ້ມຮ້າງຢູ່
9 ຈົ່ງອ້າປາກຂອງເຈົ້າ ພິພາກສາຢ່າງຊອບທຳ
ຮັກສາສິດທິຂອງຄົນຍາກຈົນ ແລະຄົນຂັດສົນໃຫ້ຄົງຢູ່

## ເມຍທີ່ດີ

10 ໃຜຈະພົບເມຍທີ່ດີ
ເພາະຄ່າຂອງນາງປະເສີດຍິ່ງ ກວ່າເພັດນິນຈິນດາຈັກເທົ່າໃດ
11 ຈິດໃຈຂອງຜົວນາງກໍວາງໃຈໃນນາງ
ແລະຜົວຈະບໍ່ຂາດກຳໄລ
12 ນາງຈະເຮັດຄວາມດີໃຫ້ລາວ ບໍ່ເຮັດຄວາມຮ້າຍ
ຕະຫລອດຊີວິດຂອງນາງ
13 ນາງສະແຫວງຫາຂົນແກະ ແລະຜ້າປ່ານ
ແລະເຮັດວຽກດ້ວຍມືຢ່າງເຕັມໃຈ
14 ນາງເປັນເໝືອນກຳປັ່ນຂອງພໍ່ຄ້າ
ນາງນຳອາຫານຂອງນາງມາຈາກບ່ອນໄກ
15 ນາງລຸກຂຶ້ນຕັ້ງແຕ່ຍັງມືດຢູ່
ແລະຈັດອາຫານໃຫ້ຄົວເຮືອນຂອງນາງ

ແລະຈັດສ່ວນແບ່ງໃຫ້ແກ່ສາວໃຊ້ຂອງນາງ
16 ນາງພິຈາລະນາເບິ່ງໄຮ່ນາແລ້ວກໍຊື້ໄວ້ ດ້ວຍຜົນຈາກນໍ້າມືຂອງນາງ
ນາງປູກສວນອະງຸ່ນ
17 ນາງຄາດແອວຂອງນາງດ້ວຍກຳລັງ
ແລະເຮັດໃຫ້ແຂນຂອງນາງເຂັ້ມແຂງ
18 ນາງຮູ້ວ່າສິນຄ້າຂອງນາງເປັນຂອງທີ່ດີ
ກາງຄືນຕະກຽງຂອງນາງກໍບໍ່ດັບ
19 ນາງຍື່ນມືອອກຈັບໄມ້ປັ່ນດ້າຍ
ແລະມືຂອງນາງຈັບເຄື່ອງປັ່ນ
20 ນາງແບ່ງປັນໃຫ້ຄົນຍາກຈົນ
ເອີ ນາງຍື່ນມືອອກຊ່ວຍຄົນຂັດສົນ
21 ນາງບໍ່ຢ້ານຫິມະມາເຮັດອັນຕະລາຍແກ່ຄົນໃນຄົວເຮືອນຂອງນາງ
ເພາະບັນດາຄົນໃນຄົວເຮືອນຂອງນາງສວມເສື້ອສີແດງສົດ
22 ນາງເຮັດຜ້າປູສຳລັບນາງດ້ວຍການຕໍ່າ
ເສື້ອຜ້າຂອງນາງເຮັດດ້ວຍຜ້າລິນິນ ແລະຜ້າສີມ່ວງ
23 ຜົວຂອງນາງເປັນທີ່ຮູ້ຈັກທີ່ປະຕູເມືອງ
ເມື່ອລາວນັ່ງຢູ່ໃນໝູ່ພວກຜູ້ໃຫຍ່ຂອງແຜ່ນດິນ
24 ນາງເຮັດເຄື່ອງແຕ່ງກາຍດ້ວຍຜ້າລິນິນໄວ້ຂາຍ
ນາງສົ່ງຜ້າຄາດແອວໃຫ້ແກ່ພໍ່ຄ້າ
25 ກຳລັງ ແລະກຽດຕິຍົດເປັນເຄື່ອງນຸ່ງຫົ່ມຂອງນາງ
ນາງຈະປິຕິຍິນດີໃນອະນາຄົດ
26 ນາງອ້າປາກກ່າວດ້ວຍສະຕິປັນຍາ
ແລະຄຳສອນປະສົມຄວາມເມດຕາຢູ່ທີ່ລີ້ນຂອງນາງ
27 ນາງເບິ່ງແຍງການງານໃນຄົວເຮືອນຂອງນາງ
ແລະບໍ່ຮັບປະທານອາຫານແຫ່ງຄວາມຂີ້ຄ້ານ
28 ລູກຂອງນາງຕື່ນຂຶ້ນມາກໍຊົມເຊີຍນາງ
ຜົວຂອງນາງກໍສັນເສີນນາງ
29 ວ່າ “ຍິງເປັນຈຳນວນຫລາຍເຮັດຢ່າງດີເລີດ
ແຕ່ນາງດີເລີດຍິ່ງກວ່າພວກເຂົາທັງໝົດ”
30 ສະເໜ່ເປັນຂອງຫລອກລວງ ແລະຄວາມງາມກໍບໍ່ມີປະໂຫຍດ
ແຕ່ຍິງທີ່ຢຳເກງ **ພຣະຜູ້ເປັນເຈົ້າ** ຈະໄດ້ຮັບການສັນເສີນ
31 ຈົ່ງໃຫ້ນາງຮັບຜົນຈາກນໍ້າມືຂອງນາງ
ແລະໃຫ້ການງານຂອງນາງສັນເສີນນາງທີ່ປະຕູເມືອງ

# ປັນຍາຈານ

## ບົດທີ 1

### ຖ້າບໍ່ມີພຣະເຈົ້າແລ້ວ ການງານ ແລະ ປັນຍາທັງໝົດຂອງມະນຸດ ກໍບໍ່ເປັນປະໂຫຍດ

[1]ຖ້ອຍຄຳຂອງປັນຍາຈານ ຜູ້ເປັນລູກຊາຍຂອງດາວິດ ກະສັດໃນເຢຣູຊາເລັມ.

[2] ປັນຍາຈານກ່າວວ່າ ບໍ່ເປັນປະໂຫຍດ ບໍ່ໄດ້ຜົນ
ສາລະພັດລ້ວນແຕ່ບໍ່ໄດ້ຜົນ.

[3] ມະນຸດເຮັດວຽກໜັກຈົນໝົດເຫື່ອແຮງພາຍໃຕ້ດວງຕາເວັນ
ລາວໄດ້ປະໂຫຍດຫຍັງຈາກງານທັງໝົດທີ່ລາວເຮັດນັ້ນ?

### ສິ່ງສາລະພັດທີ່ປາດຖະໜາກໍລ່ວງລັບໄປ

[4] ຊົ່ວອາຍຸໜຶ່ງລ່ວງໄປ ແລະອີກຊົ່ວອາຍຸໜຶ່ງກໍມາ
ແຕ່ແຜ່ນດິນໂລກຍັງຄົງເດີມຢູ່ເປັນນິດ.

[5] ດວງຕາເວັນຂຶ້ນ ແລະດວງຕາເວັນຕົກ
ແລ້ວຮີບໄປເຖິງບ່ອນ ຊຶ່ງມັນຂຶ້ນມານັ້ນ.

[6] ລົມພັດໄປທາງໃຕ້ ແລ້ວວຽນກັບໄປທາງເໜືອ ລົມພັດວຽນໄປວຽນມາ
ແລ້ວລົມກໍພັດກັບຕາມທາງວຽນຂອງມັນ.

[7] ແມ່ນໍ້າທັງຫລາຍໄຫລໄປສູ່ທະເລ ແຕ່ທະເລກໍບໍ່ເຕັມ
ແມ່ນໍ້າໄຫລໄປສູ່ບ່ອນໃດກໍໄຫລໄປສູ່ບ່ອນນັ້ນອີກ.

[8] ສາລະພັດນຳໄປສູ່ຄວາມເບື່ອໜ່າຍ ແມ່ນໃຜກໍເວົ້າບໍ່ອອກ
ຕາກໍເບິ່ງບໍ່ອີ່ມ ຫລືຫູກໍຟັງບໍ່ເຕັມ.

[9] ສິ່ງທີ່ເປັນຂຶ້ນແລ້ວຄືສິ່ງທີ່ຈະເປັນຂຶ້ນອີກ ສິ່ງທີ່ເຮັດແລ້ວຄືສິ່ງທີ່ຈະຕ້ອງເຮັດອີກ
ແລະບໍ່ມີສິ່ງໃດໃໝ່ພາຍໃຕ້ດວງຕາເວັນ.

[10] ມີອັນໃດແດ່ທີ່ເຂົາຈະເວົ້າໄດ້ວ່າ "ເບິ່ງແມ ສິ່ງນີ້ໃໝ່"
ສິ່ງນັ້ນມີຢູ່ແລ້ວໃນສະໄໝກ່ອນເຮົາທັງຫລາຍ.

[11] ບໍ່ມີການຈື່ຈຳເຖິງສະໄໝກ່ອນ
ແລະຈະບໍ່ມີການຈົດຈຳສິ່ງຫລັງໆທີ່ຈະເກີດມາທ່າມກາງບັນດາຜູ້ທີ່ມາພາຍຫລັງ.

### ສະຕິປັນຍາ ແລະ ຄວາມຮູ້ຫລວງຫລາຍນຳຄວາມເສົ້າໂສກ ແລະ ຄວາມເສຍໃຈມາສູ່ເຮົາ

[12]ຂ້າພະເຈົ້າ ປັນຍາຈານ ເຄີຍເປັນກະສັດເໜືອອິສຣາເອນໃນກຸງເຢຣູຊາເລັມ. [13]ຂ້າພະ-
ເຈົ້າຕັ້ງໃຈຊອກ ແລະສະແຫວງຫາໂດຍສະຕິປັນຍາ ເຖິງສິ່ງສາລະພັດທີ່ເຮັດພາຍໃຕ້ຟ້າສະ-
ຫວັນ ເປັນເລື່ອງຍາກລຳບາກຊຶ່ງພຣະເຈົ້າປະທານໃຫ້ລູກຂອງມະນຸດເຮັດຢູ່ນັ້ນ. [14]ຂ້າພະເຈົ້າ

ເຄີຍເຫັນການທັງປວງ ຊຶ່ງເຂົາເຮັດພາຍໃຕ້ດວງຕາເວັນ ແລະເບິ່ງແມ ສາລະພັດກໍບໍ່ໄດ້ຜົນ ຄື
ກິນລົມກິນແລ້ງ.

[15] ແມ່ນຫຍັງທີ່ຄົດແລ້ວຈະເຮັດໃຫ້ຊື່ບໍ່ໄດ້
ແລະແມ່ນຫຍັງທີ່ຂາດຢູ່ຈະນັບໃຫ້ຄົບກໍບໍ່ໄດ້.

[16]ຂ້າພະເຈົ້າຄຶດໃນໃຈວ່າ "ເບິ່ງແມ ຂ້າພະເຈົ້າມີຖານະສູງ ແລະໄດ້ສະຕິປັນຍາຫລາຍກວ່າ
ທຸກຄົນທີ່ຢູ່ໃນເມືອງ ເຢຣູຊາເລັມ ກ່ອນຂ້າພະເຈົ້າ ເອີ ໃຈຂ້າພະເຈົ້າກໍໄດ້ເຫັນໃນສະຕິປັນຍາ
ແລະຄວາມຮູ້ຢ່າງຫລວງຫລາຍ". [17]ຂ້າພະເຈົ້າຕັ້ງໃຈຈະໄດ້ຮູ້ສະຕິປັນຍາ ຮູ້ຄວາມບ້າ ແລະ
ຄວາມໂງ່ຈ້າ ຂ້າພະເຈົ້າສັງເກດເຫັນວ່າເລື່ອງນີ້ກໍເປັນພຽງແຕ່ການໄລ່ຕາມລົມ.

[18] ເພາະໃນສະຕິປັນຍາຫລວງຫລາຍກໍມີຄວາມທຸກລະທົມຫລາຍ
ແລະບຸກຄົນທີ່ເພີ່ມຄວາມຮູ້ ກໍເພີ່ມຄວາມເສົ້າໂສກ.

# ບົດທີ 2

## ຄວາມເບີກບານມ່ວນຊື່ນ ແລະ ຄວາມໂງ່ຈ້າກໍບໍ່ໄດ້ຜົນ

[1]ຂ້າພະເຈົ້າຄຶດໃນໃຈວ່າ "ມາແມ ມາລອງຄວາມເບີກບານມ່ວນຊື່ນກັນເບິ່ງ ຈົ່ງມ່ວນຊື່ນສະ-
ບາຍໃຈໄປ" ແຕ່ເບິ່ງແມ ເລື່ອງນີ້ກໍບໍ່ໄດ້ຜົນເຊັ່ນກັນ. [2]ຂ້າພະເຈົ້າເວົ້າກ່ຽວກັບການຫົວຂວັນວ່າ
"ເຈົ້າບ້າບໍ" ແລະກ່າວເຖິງຄວາມເບີກບານມ່ວນຊື່ນວ່າ "ມີປະໂຫຍດອັນໃດ?" [3]ຂ້າພະເຈົ້າຄຶດ
ໃນໃຈວ່າຈະເຮັດຢ່າງໃດ ກາຍຈຶ່ງຈະຄຶກຄັກດ້ວຍເຫລົ້າອະງຸ່ນ ແລະໃຈຍັງຄົງແນະນຳຂ້າພະ-
ເຈົ້າດ້ວຍສະຕິປັນຍາ ແລະຈະເກາະຄວາມໂງ່ຈ້າໄວ້ຢ່າງໃດ ຈົນຂ້າພະເຈົ້າຈະເຫັນໄດ້ວ່າ ແມ່ນ
ຫຍັງດີສຳລັບໃຫ້ລູກຊາຍທັງຫລາຍຂອງມະນຸດເຮັດພາຍໃຕ້ທ້ອງຟ້າຕະຫລອດຊີວິດຂອງພວກ
ເຂົາ.

## ເຮືອນໃຫຍ່ໆ ແລະ ຊັບສົມບັດກໍບໍ່ໄດ້ຜົນ

[4]ຂ້າພະເຈົ້າໄດ້ເຮັດການອັນຍິ່ງໃຫຍ່ຫລາຍ ຂ້າພະເຈົ້າໄດ້ສ້າງເຮືອນຫລາຍຫລັງ ແລະປູກ
ສວນອະງຸ່ນຫລາຍຕອນ [5]ຂ້າພະເຈົ້າເຮັດສວນພັກຜ່ອນຢ່ອນໃຈ ແລະສວນໝາກໄມ້ຫລາຍ
ແຫ່ງ ປູກຕົ້ນໄມ້ກິນໝາກທຸກຢ່າງໄວ້ໃນສວນເຫລົ່ານັ້ນ [6]ຂ້າພະເຈົ້າສ້າງສະນ້ຳຫລາຍສະສຳ-
ລັບຕົວເອງ ເພື່ອຈະໃຊ້ນ້ຳໃນສະນັ້ນຫົດຕົ້ນໄມ້ທີ່ກຳລັງງອກງາມ [7]ຂ້າພະເຈົ້າຊື້ຂ້າທາດຊາຍຍິງ
ໄວ້ ມີຂ້າທາດເກີດຂຶ້ນໃນເຮືອນ ຂ້າພະເຈົ້າມີຝູງງົວຝູງແບ້ແກະເປັນສົມບັດຫລາຍກວ່າຂອງ
ບັນດາຄົນທີ່ຢູ່ໃນກຸງ ເຢຣູຊາເລັມ ກ່ອນຂ້າພະເຈົ້າ [8]ຂ້າພະເຈົ້າສະສົມເງິນຄຳໄວ້ ແລະຮວບຮວມ
ຊັບສົມບັດອັນຄວນຄູ່ກັບກະສັດ ແລະຄວນຄູ່ກັບເມືອງທັງຫລາຍ ຂ້າພະເຈົ້າມີນັກຮ້ອງຊາຍຍິງ
ສຳລັບຕົວເອງ ແລະເມຍນ້ອຍ ຊຶ່ງເປັນສິ່ງຖືກໃຈຂອງຜູ້ຊາຍ. [9]ຂ້າພະເຈົ້າຈຶ່ງເປັນໃຫຍ່ ແລະ
ຈະເລີນຫລາຍກວ່າບັນດາຄົນທີ່ເຄີຍຢູ່ມາກ່ອນຂ້າພະເຈົ້າໃນ ເຢຣູຊາເລັມ ແລະສະຕິປັນຍາຂອງ
ຂ້າພະເຈົ້າຍັງຄົງຢູ່ກັບຂ້າພະເຈົ້າ.

[10]ສິ່ງໃດໆທີ່ຕາຂອງຂ້າພະເຈົ້າຢາກເຫັນ ຂ້າພະເຈົ້າກໍບໍ່ປິດບັງ ຂ້າພະເຈົ້າບໍ່ໄດ້ຫ້າມໃຈຈາກ
ຄວາມເບີກບານມ່ວນຊື່ນໃດໆ ເພາະໃຈຂ້າພະເຈົ້າພົບຄວາມສະໜຸກສະໜານໃນບັນດາງານ

ຂອງຂ້າພະເຈົ້າ ແລະນີ້ເປັນສ່ວນຈາກງານທັງໝົດຂອງຂ້າພະເຈົ້າ. [11]ແລ້ວຂ້າພະເຈົ້າຫັນມາ
ເບິ່ງບັນດາສິ່ງທີ່ມືຂ້າພະເຈົ້າໄດ້ເຮັດ ແລະຄວາມອິດເມື່ອຍທີ່ຂ້າພະເຈົ້າທຸ້ມເທລົງໄປແລະເບິ່ງ
ແມ ທຸກຢ່າງກໍບໍ່ໄດ້ຜົນ ຄື ກິນລົມກິນແລ້ງ ແລະບໍ່ເປັນປະໂຫຍດຫຍັງພາຍໃຕ້ດວງຕາເວັນ.

## ການງານ ຊັບສົມບັດ ແລະ ສະຕິປັນຍາກໍບໍ່ໄດ້ຜົນ

[12]ຂ້າພະເຈົ້າຈຶ່ງຫັນມາພິຈາລະນາສະຕິປັນຍາ ຄວາມບ້າ ແລະຄວາມໂງ່ຈ້າ ເພາະຄົນທີ່ມາ
ພາຍຫລັງກະສັດຈະເຮັດຫຍັງໄດ້ແດ່ ລາວກໍເຮັດສິ່ງທີ່ລາວເຮັດມາດົນແລ້ວນັ້ນໄດ້. [13]ຂ້າພະ-
ເຈົ້າເຫັນວ່າສະຕິປັນຍາວິເສດກວ່າຄວາມໂງ່ຈ້າ ເໝືອນກັບຄວາມສະຫວ່າງວິເສດກວ່າຄວາມ
ມືດ.

[14]ຄົນມີສະຕິປັນຍາກໍມີຕາຢູ່ໃນສະໝອງ ແຕ່ຄົນໂງ່ຍ່າງໃນຄວາມມືດ ເຖິງປານນັ້ນ ຂ້າພະ-
ເຈົ້າຍັງເຫັນວ່າ ເຫດການຢ່າງດຽວກັນເກີດຂຶ້ນແກ່ພວກເຂົາທັງປວງ.

[15]ຂ້າພະເຈົ້າຈຶ່ງຄຶດໃນໃຈວ່າ

"ເຫດການອັນເກີດແກ່ຄົນໂງ່ສັນໃດ ກໍຈະເກີດກັບຕົວຂ້າພະເຈົ້າສັນນັ້ນ
ຖ້າຢ່າງນັ້ນແລ້ວ ຂ້າພະເຈົ້າຈະມີສະຕິປັນຍາຫລວງຫລາຍໄປເຮັດຫຍັງ?"

ຂ້າພະເຈົ້າຈຶ່ງຄຶດໃນໃຈວ່າ "ເລື່ອງນີ້ກໍບໍ່ໄດ້ຜົນຄືກັນ".

[16]ເພາະຕະຫລອດໄປ ບໍ່ມີໃຜລະນຶກເຖິງຄົນມີສະຕິປັນຍາຫລາຍກວ່າຄົນໂງ່ ດ້ວຍເຫັນວ່າ
ໃນອະນາຄົດກໍລືມກັນໝົດແລ້ວ ແລ້ວຄົນມີສະຕິປັນຍາກໍຕາຍເໝືອນກັບຄົນໂງ່. [17]ຂ້າພະເຈົ້າ
ຈຶ່ງກຽດຊັງຊີວິດ ເພາະວ່າການງານທີ່ເຂົາເຈົ້າເຮັດກັນພາຍໃຕ້ດວງຕາເວັນກໍ່ຄວາມເສົ້າສະຫລົດ
ໃຈໃຫ້ແກ່ຂ້າພະເຈົ້າ ເພາະສິ່ງສາລະພັດກໍລ້ວນແຕ່ບໍ່ໄດ້ຜົນ ຄືກິນລົມກິນແລ້ງ.

[18]ຂ້າພະເຈົ້າກຽດຊັງວຽກງານທັງໝົດຂອງຂ້າພະເຈົ້າຊຶ່ງຂ້າພະເຈົ້າເຮັດວຽກໜັກຈົນໝົດ
ເຫື່ອແຮງຢູ່ພາຍໃຕ້ດວງຕາເວັນ ເພາະຂ້າພະເຈົ້າຈຳຕ້ອງປະວຽກນັ້ນໄວ້ໃຫ້ແກ່ຄົນທີ່ມາພາຍ-
ຫລັງຂ້າພະເຈົ້າ. [19]ແລ້ວໃຜຈະໄປຮູ້ວ່າຄົນນັ້ນຈະເປັນຄົນມີສະຕິປັນຍາຫລືຄົນໂງ່ ປານນັ້ນລາວ
ກໍຄອບຄອງບັນດາການງານຂອງຂ້າພະເຈົ້າທີ່ຂ້າພະເຈົ້າໄດ້ເຮັດຈົນໝົດເຫື່ອແຮງມາແລະທີ່ຂ້າ-
ພະເຈົ້າໃຊ້ສະຕິປັນຍາເຮັດພາຍໃຕ້ດວງຕາເວັນ. ອັນນີ້ກໍບໍ່ໄດ້ຜົນ. [20]ຂ້າພະເຈົ້າຈຶ່ງອັດອັ້ນຕັນ
ໃຈຫລາຍເຖິງເລື່ອງການງານທັງໝົດຂອງຂ້າພະເຈົ້າ ຊຶ່ງຂ້າພະເຈົ້າເຮັດຈົນໝົດເຫື່ອແຮງພາຍ
ໃຕ້ດວງຕາເວັນ. [21]ດ້ວຍວ່າມີຄົນທີ່ເຮັດວຽກໂດຍໃຊ້ສະຕິປັນຍາຄວາມຮູ້ແລະຄວາມຊຳນານ
ແຕ່ແລ້ວກໍປະວຽກນັ້ນໃຫ້ເປັນສ່ວນຂອງອີກຄົນໜຶ່ງທີ່ບໍ່ໄດ້ອອກແຮງເຮັດວຽກນັ້ນ ອັນນີ້ກໍບໍ່ໄດ້-
ຜົນ ແລະຊົ່ວຮ້າຍຫລາຍ. [22]ເພາະວ່າລາວໄດ້ຫຍັງຈາກບັນດາວຽກງານອັນໜັກໜ່ວງແລະ
ຄວາມທຸກລະທົມໃນໃຈທີ່ລາວຕ້ອງເຮັດພາຍໃຕ້ດວງຕາເວັນ. [23]ດ້ວຍວ່າວັນເດືອນປີທັງຫລາຍ
ຂອງລາວມີແຕ່ຄວາມເຈັບປວດ ແລະກິດທຸລະຂອງລາວກໍ່ຄວາມສະຫລົດໃຈ ຕອນກາງຄືນຈິດ-
ໃຈຂອງລາວກໍບໍ່ຢຸດພັກສະຫງົບ ອັນນີ້ກໍບໍ່ໄດ້ຜົນດ້ວຍ.

[24]ສຳລັບມະນຸດນັ້ນ ບໍ່ມີຫຍັງດີໄປກວ່າກິນ ແລະດື່ມ ກັບຫາຄວາມມ່ວນຊື່ນສຳລັບຈິດໃຈໃນ
ການງານຂອງຕົນ. ນີ້ແຫລະ ຂ້າພະເຈົ້າເຫັນວ່າເປັນມາຈາກພຣະຫັດຂອງພຣະເຈົ້າ. [25]ດ້ວຍ
ວ່າຖ້າບໍ່ອາໄສພຣະເຈົ້າ ໃຜຈະກິນໄດ້ ຫລືໃຜຈະຊື່ນບານໄດ້? [26]ເພາະວ່າພຣະເຈົ້າປະທານ

ສະຕິປັນຍາ ຄວາມຮູ້ ແລະຄວາມຍິນດີໃຫ້ແກ່ຄົນທີ່ພຣະອົງພໍພຣະໄທໃນສາຍພຣະເນດຂອງພຣະອົງ ແຕ່ສ່ວນຄົນບາບ ພຣະອົງປະທານວຽກງານທີ່ຕ້ອງເກັບກ່ຽວ ແລະສະສົມ ເພື່ອໃຫ້ແກ່ຜູ້ທີ່ພໍພຣະໄທຕໍ່ພຣະພັກພຣະເຈົ້າ ອັນນີ້ກໍບໍ່ໄດ້ຜົນຄືກິນລົມກິນແລ້ງ.

# ບົດທີ 3

## ຄວາມສະໜຸກສະໜານທັງຫລາຍຢູ່ຊົ່ວຄາວ

1 ມີລະດູສຳລັບທຸກສິ່ງ
ແລະມີເວລາກຳນົດສຳລັບການງານທຸກຢ່າງພາຍໃຕ້ຟ້າສະຫວັນ
2 ມີເວລາເກີດ ແລະມີເວລາຕາຍ
ມີເວລາປູກ ແລະມີເວລາຖອນສິ່ງທີ່ປູກຖິ້ມ
3 ມີເວລາຂ້າ ແລະມີເວລາຮັກສາໃຫ້ຫາຍ
ມີເວລາຮື້ທຳລາຍລົງ ແລະມີເວລາກໍ່ສ້າງຂຶ້ນ
4 ມີເວລາຮ້ອງໄຫ້ ແລະມີເວລາຫົວຮ້ອງ
ມີເວລາໂສກເສົ້າ ແລະມີເວລາເຕັ້ນລຳ
5 ມີເວລາໂຍນຫີນຖິ້ມ ແລະມີເວລາເກັບຮອບຮອມຫີນໄວ້
ມີເວລາກອດກັນ ແລະມີເວລາຍົກເວັ້ນການກອດ
6 ມີເວລາສະແຫວງຫາ ແລະມີເວລາສູນຫາຍ
ເວລາເກັບຮັກສາໄວ້ ແລະເວລາໂຍນຖິ້ມໄປ
7 ມີເວລາຈີກຂາດ ແລະເວລາຫຍິບ
ເວລາງຽບ ແລະເວລາເວົ້າ
8 ມີເວລາຮັກ ແລະມີເວລາກຽດຊັງ
ເວລາສົງຄາມ ແລະເວລາສັນຕິ

9 ຄົນງານໄດ້ກຳໄລຫຍັງຈາກການງານຂອງຕົນ? 10 ຂ້າພະເຈົ້າເຫັນພາລະ ຊຶ່ງພຣະເຈົ້າປະ-
ທານໃຫ້ມະນຸດເຮັດຢູ່ນັ້ນ. 11 ພຣະອົງກະທຳໃຫ້ສັບພະທຸກສິ່ງງົດງາມຕາມລະດູການຂອງມັນ
ພຣະອົງບັນຈຸຄວາມນິລັນດອນໄວ້ໃນຈິດໃຈຂອງມະນຸດ ແຕ່ມະນຸດຍັງເບິ່ງບໍ່ເຫັນວ່າ ພຣະເຈົ້າ
ກະທຳຫຍັງໄວ້ຕັ້ງແຕ່ຕົ້ນເດີມຈົນວາລະສຸດປາຍ. 12 ຂ້າພະເຈົ້າຮູ້ແລ້ວວ່າສຳລັບພວກເຂົາບໍ່ມີ
ຫຍັງທີ່ຈະດີໄປກວ່າຄວາມຊົມຊື່ນຍິນດີ ແລະເຮັດການດີຕະຫລອດຊີວິດ. 13 ແລະເປັນຂອງປະ-
ທານຈາກພຣະເຈົ້າແກ່ມະນຸດທີ່ຈະໃຫ້ມະນຸດໄດ້ກິນດື່ມ ແລະມ່ວນຊື່ນໃນບັນດາການງານຂອງ
ພວກເຂົາ. 14 ຂ້າພະເຈົ້າຮູ້ຢູ່ວ່າສາລະພັດທີ່ພຣະເຈົ້າຊົງກະທຳກໍດຳລົງຢູ່ເປັນນິດ ຈະເພີ່ມເຕີມ
ຫຍັງເຂົ້າໄປອີກກໍບໍ່ໄດ້ ຫລືຈະຖອດຫຍັງອອກກໍບໍ່ໄດ້ ພຣະເຈົ້າຊົງກະທຳເຊັ່ນນັ້ນ ເພື່ອໃຫ້ຄົນ
ທັງຫລາຍມີຄວາມຢຳເກງຕໍ່ພຣະພັກພຣະອົງ. 15 ສິ່ງໃດໆຊຶ່ງເປັນຢູ່ໃນປະຈຸບັນກໍເປັນຢູ່ມາດົນ
ແລ້ວ ແລະສິ່ງໃດໆທີ່ຈະເປັນມາກໍເຄີຍເປັນຢູ່ມາດົນແລ້ວ ແລະພຣະເຈົ້າຊົງສະແຫວງຫາສິ່ງທີ່
ລ່ວງລັບໄປນັ້ນ.

16ຫລາຍກວ່ານັ້ນອີກ ຢູ່ພາຍໃຕ້ດວງຕາເວັນ ຂ້າພະເຈົ້າເຫັນວ່າໃນບ່ອນຂອງຄວາມຍຸດຕິທຳ
ມີຄວາມຊົ່ວຮ້າຍຢູ່ດ້ວຍ ແລະໃນບ່ອນຂອງຄວາມຊອບທຳມີຄວາມຊົ່ວຊ້າຢູ່ນຳ. 17ຂ້າພະເຈົ້າ
ຄຶດໃນໃຈຂອງຂ້າພະເຈົ້າວ່າ "ພຣະເຈົ້າຈະພິພາກສາຄົນຊອບທຳ ແລະຄົນຊົ່ວຮ້າຍ ເພາະມີ
ເວລາກຳນົດໄວ້ສຳລັບທຸກເລື່ອງ ແລະສຳລັບການງານທຸກຢ່າງ".

18ຂ້າພະເຈົ້າຄຶດໃນໃຈຂອງຂ້າພະເຈົ້າກ່ຽວກັບສະພາບຂອງມະນຸດວ່າ "ພຣະເຈົ້າທົດສອບ
ພວກເຂົາ ເພື່ອຈະສະແດງວ່າພວກເຂົາເປັນເໝືອນສັດເທົ່ານັ້ນ". 19ເພາະວ່າເຄາະຮ້າຍຂອງ
ມະນຸດຊາດກັບເຄາະຮ້າຍຂອງສັດເດຍລະສານນັ້ນຄືກັນ ຄືຝ່າຍໜຶ່ງຕາຍ ອີກຝ່າຍໜຶ່ງກໍຕາຍຄື
ກັນ ທັງສອງມີລົມຫາຍໃຈຢ່າງດຽວກັນ ແລະມະນຸດບໍ່ມີຫຍັງດີກວ່າສັດເດຍລະສານ ເພາະສາ-
ລະພັດກໍບໍ່ໄດ້ຜົນ. 20ສິ່ງສາລະພັດໄປຢູ່ບ່ອນດຽວກັນ ສິ່ງສາລະພັດເປັນມາຈາກຂີ້ຝຸ່ນດິນ ແລະ
ສິ່ງສາລະພັດກັບເປັນຂີ້ຝຸ່ນດິນອີກ. 21ໃຜຮູ້ວ່າຈິດວິນຍານຂອງມະນຸດໄປສູ່ເບື້ອງເທິງຫລືບໍ່
ແລະວິນຍານຂອງສັດເດຍລະສານລົງໄປສູ່ພື້ນແຜ່ນດິນຫລືບໍ່?

22ເພາະສະນັ້ນ ຂ້າພະເຈົ້າຈຶ່ງເຫັນວ່າ ບໍ່ມີຫຍັງດີໄປກວ່າທີ່ມະນຸດຈະຊົມຊື່ນຍິນດີໃນການ
ງານຂອງຕົນ ດ້ວຍວ່ານັ້ນເປັນສ່ວນຂອງລາວ ໃຜຈະນຳລາວໃຫ້ເຫັນວ່າແມ່ນຫຍັງຈະເປັນມາ
ພາຍຫລັງລາວ?

# ບົດທີ 4

## ບັນດາການຂົ່ມເຫັງ ຄວາມຊົ່ວຊ້າ ແລະ ການພົບອຸປະສັກຕ່າງໆ ກໍບໍ່ໄດ້ຜົນ

1ຂ້າພະເຈົ້າພິຈາລະນາບັນດາການຂົ່ມເຫັງທີ່ເກີດຂຶ້ນພາຍໃຕ້ດວງຕາເວັນອີກ ແລະເບິ່ງແມ
ນ້ຳຕາຂອງຜູ້ທີ່ຖືກຂົ່ມເຫັງ ບໍ່ມີຄົນເລົ້າໂລມພວກເຂົາ ຝ່າຍຜູ້ຂົ່ມເຫັງນັ້ນກຳອຳນາດ ແຕ່ບໍ່ມີຜູ້
ໃດເລົ້າໂລມພວກເຂົາ. 2ເພາະສະນັ້ນ ຂ້າພະເຈົ້າຍົກຍ້ອງຄົນທີ່ຕາຍໄປແລ້ວ ຍັງມີໂຊກດີ
ຫລາຍກວ່າຄົນທີ່ຍັງເປັນຢູ່ 3ເອີ ຄົນທີ່ຍັງບໍ່ເປັນມາ ທີ່ຍັງບໍ່ເຫັນການຊົ່ວທີ່ເກີດຂຶ້ນພາຍໃຕ້ດວງ
ຕາເວັນ ກໍຍັງດີກວ່າຄົນທັງສອງຈຳພວກນັ້ນ.

4ແລ້ວຂ້າພະເຈົ້າພິຈາລະນາບັນດາການງານອັນໜັກໜ່ວງ ແລະບັນດາສີມືໃນການງານ
ເພາະເຫດນີ້ຄົນຈຶ່ງຖືກເພື່ອນບ້ານຂອງຕົນອິດສາ. ອັນນີ້ກໍບໍ່ໄດ້ຜົນ ຄືໄລ່ຕາມລົມ.

5 ຄົນໂງ່ງໍມື ແລະກິນເນື້ອໜັງຂອງຕົນເອງ.
6 ຄວາມສະຫງົບສຸກກຳມືໜຶ່ງ
ກໍຍັງດີກວ່າການງານອັນໜັກໜ່ວງຈົນໝົດເຫື່ອແຮງສອງກຳມື
ແລະກິນລົມກິນແລ້ງ.

7ແລ້ວຂ້າພະເຈົ້າເຫັນຄວາມບໍ່ໄດ້ຜົນພາຍໃຕ້ດວງຕາເວັນອີກ.

8 ຄື ຄົນໜຶ່ງຢູ່ຄົນດຽວ ບໍ່ມີຄົນອື່ນ ບໍ່ມີລູກ ຫລືພີ່ນ້ອງ
ແຕ່ລາວເຮັດການງານບໍ່ຢຸດບໍ່ຢ່ອນ
ຕາຂອງລາວບໍ່ເຄີຍອີ່ມຄວາມຮັ່ງມີ.

ລາວບໍ່ເຄີຍຄິດວ່າ "ຂ້ອຍເຮັດວຽກໜັກຈົນໝົດເຫື່ອແຮງ ແລະຕົວຂ້ອຍອົດໆຢາກໆ
ເພື່ອຜູ້ໃດ" ອັນນີ້ກໍບໍ່ໄດ້ຜົນ ແລະເປັນເລື່ອງຊົ່ວຮ້າຍ.
9 ສອງຄົນກໍດີກວ່າຄົນດຽວ
ເພາະວ່າພວກເຂົາທັງສອງໄດ້ຮັບຜົນຂອງການດີ.
10 ດ້ວຍວ່າຖ້າຄົນໜຶ່ງລົ້ມລົງ ອີກຄົນໜຶ່ງຈະໄດ້ຍົກເພື່ອນຂອງຕົນໃຫ້ລຸກຂຶ້ນ
ແຕ່ວິບັດແກ່ຄົນນັ້ນທີ່ຢູ່ຄົນດຽວເມື່ອລາວລົ້ມລົງ ຈະບໍ່ມີຜູ້ອື່ນຍົກລາວໃຫ້ລຸກຂຶ້ນ.
11 ອັນໜຶ່ງ ຖ້າສອງຄົນນອນຢູ່ນຳກັນ ພວກເຂົາກໍອົບອຸ່ນ
ແຕ່ຖ້ານອນຄົນດຽວຈະອຸ່ນຢ່າງໄດ້ໃດ?
12 ເຖິງແມ່ນວ່າຄົນໜຶ່ງສູ້ຄົນດຽວໄດ້ ສອງຄົນຈະສູ້ລາວໄດ້ແນ່ນອນ
ເຊືອກສາມກຽວຈະຂາດງ່າຍກໍບໍ່ໄດ້.

13 ເດັກໜຸ່ມຍາກຈົນ ແລະມີສະຕິປັນຍາກໍດີກວ່າເຖົ້າຊະລາ ແລະໂງ່ຈ້າ ຜູ້ບໍ່ຍອມຮັບຄຳ
ແນະນຳອີກແລ້ວ. 14 ເຖິງແມ່ນວ່າຄົນໜຸ່ມນັ້ນອອກມາຈາກຄຸກແລ້ວຂຶ້ນເປັນກະສັດ ຫລືເກີດເປັນ
ຄົນຍາກຈົນໃນອານາຈັກຂອງຕົນ. 15 ຂ້າພະເຈົ້າພິຈາລະນາບັນດາຄົນທີ່ມີຊີວິດເຄື່ອນໄຫວໄປ
ມາຢູ່ພາຍໃຕ້ດວງຕາເວັນ ຄົນໜຸ່ມນັ້ນກໍຂຶ້ນເປັນກະສັດແທນ. 16 ປະຊາຊົນທັງຫລາຍຄືບັນດາຜູ້
ຊຶ່ງຢູ່ກ່ອນນັ້ນ ກໍບໍ່ມີບ່ອນສິ້ນສຸດ ແລະບັນດາຄົນທີ່ມາພາຍຫລັງກໍຈະບໍ່ຊົມຊື່ນຍິນດີໃນຄົນໜຸ່ມ
ນັ້ນ. ແນ່ນອນ ອັນນີ້ກໍບໍ່ໄດ້ຜົນ ຄືກິນລົມກິນແລ້ງ.

# ບົດທີ 5

## ຊີວິດກໍບໍ່ໄດ້ຜົນ

1 ເຈົ້າຈົ່ງລະວັງຕີນຂອງເຈົ້າເມື່ອເຈົ້າໄປໃນພຣະວິຫານຂອງ **ພຣະເຈົ້າ** ເພາະການເຂົ້າໃກ້ຊິດ
ເພື່ອຈະຟັງ ກໍດີກວ່າຄົນໂງ່ຖວາຍບູຊາ ດ້ວຍວ່າພວກເຂົາບໍ່ຮູ້ວ່າຕົນກຳລັງເຮັດຊົ່ວ.

2 ຢ່າໃຫ້ໃຈຂອງເຈົ້າໄວ ແລະຢ່າໃຫ້ປາກຂອງເຈົ້າອ້າຕໍ່ເບື້ອງພຣະພັກ **ພຣະເຈົ້າ** ເພາະວ່າ
**ພຣະເຈົ້າ** ສະຖິດໃນສະຫວັນ ແລະເຈົ້າຢູ່ເທິງແຜ່ນດິນໂລກ ເຫດສະນັ້ນ ເຈົ້າຈົ່ງເວົ້າໜ້ອຍຄຳ.
3 ຄວາມຝັນຈະມາ ເມື່ອມີການງານຫລາຍ ແລະຈະໄດ້ຍິນຄຳໂງ່ໆ ເມື່ອເວົ້າຫລາຍ ແຕ່ບໍ່ເປັນ
ປະໂຫຍດ.

4 ເມື່ອເຈົ້າປະຕິຍານໄວ້ຕໍ່ **ພຣະເຈົ້າ** ຢ່າຊັກຊ້າທີ່ຈະເຮັດຕາມຄຳປະຕິຍານນັ້ນໃຫ້ສຳເລັດ
ເພາະພຣະອົງບໍ່ຊົງພໍພຣະໄທໃນຄົນໂງ່ ຈົ່ງເຮັດຕາມທີ່ເຈົ້າປະຕິຍານໄວ້ສາ. 5 ການທີ່ເຈົ້າບໍ່ປະ-
ຕິຍານ ກໍຍັງດີກວ່າທີ່ເຈົ້າປະຕິຍານແລ້ວບໍ່ເຮັດຕາມ. 6 ຢ່າໃຫ້ປາກຂອງເຈົ້າເປັນເຫດນຳຕົວເຈົ້າ
ໃຫ້ເຮັດຜິດແລະຢ່າເວົ້າຕໍ່ໜ້າຜູ້ສົ່ງຂ່າວສານຂອງ **ພຣະເຈົ້າ** ວ່າ ນີ້ແຫລະ ເປັນຄຳຫລົງຜິດ ເຫດ
ໃດຈຶ່ງຈະໃຫ້ **ພຣະເຈົ້າ** ຊົງພຣະພິໂລດ ເພາະສຽງເວົ້າຂອງເຈົ້າ ແລ້ວຈະໄດ້ທຳລາຍການງານ
ແຫ່ງນໍ້າມືຂອງເຈົ້າເສຍ? 7 ເພາະວ່າເມື່ອຝັນຫລາຍ ແລະຄຳເວົ້າຫລົ້ນກໍຫລາຍດ້ວຍ ແຕ່ເຈົ້າຈົ່ງ
ຢຳເກງ **ພຣະເຈົ້າ**.

8 ຖ້າເຈົ້າເຫັນຄົນຈົນໃນເມືອງຖືກຂົ່ມເຫັງກໍດີ ເຫັນຄວາມຍຸດຕິທຳ ແລະຄວາມທ່ຽງທຳຖືກ

ເອົາໄປກໍດີ ເຈົ້າຢ່າປະຫລາດໃຈໃນເລື່ອງນັ້ນ ດ້ວຍວ່າມີເຈົ້າໜ້າທີ່ຄອຍຖ້າຈັບຕາເຈົ້າໜ້າທີ່ຢູ່
ແລ້ວຍັງມີຜູ້ສູງກວ່າອີກຊັ້ນໜຶ່ງຈັບຕາຢູ່ເໜືອພວກເຂົາທັງໝົດ. 9ຫລາຍກວ່ານັ້ນອີກ ຜົນປະ-
ໂຫຍດແຫ່ງແຜ່ນດິນໂລກ ກໍຢູ່ທີ່ພວກເຂົາເຫລົ່ານັ້ນທັງໝົດ ກະສັດເອງກໍໄດ້ຮັບລາຍໄດ້ຈາກ
ໄຮ່ນານັ້ນ.

10ຄົນຮັກເງິນຍ່ອມບໍ່ອີ່ມເງິນ ແລະຄົນຮັກສົມບັດກໍບໍ່ຮູ້ຈັກອີ່ມກຳໄລ ອັນນີ້ກໍບໍ່ໄດ້ຜົນດ້ວຍ.

11ເມື່ອຂອງດີເພີ່ມພູນຂຶ້ນ ຄົນກິນກໍມີຫລວງຫລາຍຂຶ້ນ ຄົນທີ່ເປັນເຈົ້າຂອງຊັບຈະໄດ້ປະ-
ໂຫຍດຫຍັງ ນອກຈາກຈະໄດ້ເຫັນເປັນຂວັນຕາເທົ່ານັ້ນ?

12ການນອນຫລັບຂອງຄົນທີ່ເຮັດວຽກກໍເປັນສຸກ ບໍ່ວ່າລາວໄດ້ກິນອີ່ມ ຫລືບໍ່ອີ່ມກໍຄືກັນ ແຕ່
ວ່າຄວາມອີ່ມທ້ອງຂອງຄົນຮັ່ງມີ ກໍບໍ່ຊ່ວຍລາວໃຫ້ນອນຫລັບ.

13ຍັງມີສິ່ງຊົ່ວຮ້າຍອັນໜ້າສະຫລົດໃຈອີກຢ່າງໜຶ່ງທີ່ຂ້າພະເຈົ້າເຫັນພາຍໃຕ້ດວງຕາເວັນ ຄື
ຊັບສົມບັດທີ່ເຈົ້າຂອງໄດ້ເກັບໄວ້ຈົນເກີດເປັນໄພແກ່ຕົນ 14ແລະຊັບສົມບັດນັ້ນສູນເສຍໄປໂດຍ
ເລື່ອງຍາກລຳບາກອັນຊົ່ວຮ້າຍ ແລະລາວໃຫ້ກຳເນີດລູກຊາຍຄົນໜຶ່ງ ແຕ່ບໍ່ມີຫຍັງເຫລືອໄວ້ສຳ-
ລັບລາວ.

15ລາວໄດ້ເກີດມາຈາກທ້ອງແມ່ຕົວເປົ່າສັນໃດ ລາວຈະກັບໄປອີກເຊັ່ນດຽວກັນສັນນັ້ນ ແລະ
ລາວຈະເອົາຫຍັງຊຶ່ງເປັນຜົນງານຂອງລາວຕິດມືໄປບໍ່ໄດ້ຈັກຢ່າງ.

16ນີ້ເປັນສິ່ງຊົ່ວຮ້າຍອັນໜ້າສະຫລົດໃຈອີກ ຄືລາວໄດ້ເກີດມາຢ່າງໃດ ລາວກໍຕ້ອງໄປຢ່າງ
ນັ້ນ ລາວຈະໄດ້ປະໂຫຍດຫຍັງຈາກການທີ່ຕົນໄດ້ລົງແຮງເພື່ອລົມເພື່ອແລ້ງ? 17ອັນໜຶ່ງ ລາວ
ຮັບປະທານຢູ່ໃນຄວາມມືດຕະຫລອດວັນເດືອນປີຂອງລາວ ລາວມີຄວາມທຸກຢ່າງສາຫັດ ແລະ
ມີຄວາມທຸກໃຈຫລາຍພ້ອມກັບຄວາມເຈັບໄຂ້.

18ເບິ່ງແມ ຂ້າພະເຈົ້າເຫັນດີ ແລະສົມຄວນ ຄືໃຫ້ກິນແລະດື່ມ ກັບຊົມຊື່ນຍິນດີໃນຜົນງານດີ
ແຫ່ງບັນດາກິດຈະການຂອງຕົນທີ່ຕົນເຮັດພາຍໃຕ້ດວງຕາເວັນ ຕະຫລອດວັນເດືອນປີແຫ່ງຊີ-
ວິດຂອງຕົນທີ່ ພຣະເຈົ້າ ປະທານ ແກ່ຕົນ ເພາະການນີ້ ແຫລະ ເປັນສ່ວນຂອງຕົນ. 19ອັນໜຶ່ງ
ທຸກໆຄົນທີ່ ພຣະເຈົ້າ ປະທານຊັບສົມບັດ ແລະຄວາມຮັ່ງມີໃຫ້ ກໍໄດ້ຊົງໂຜດໃຫ້ມີອຳນາດຮັບ
ປະທານຂອງເຫລົ່ານັ້ນ ໄດ້ຮັບສ່ວນຂອງຕົນ ແລະຍິນດີໃນການງານຂອງຕົນໄດ້ ນີ້ແຫລະເປັນ
ຂອງປະທານຈາກ ພຣະເຈົ້າ. 20ລາວຈະໄດ້ບໍ່ຕ້ອງນຶກເຖິງວັນເດືອນປີແຫ່ງຊີວິດຂອງຕົນຫລາຍ
ເພາະ ພຣະເຈົ້າ ຕອບລາວ ໂດຍໃຫ້ໃຈລາວຊົມຊື່ນຍິນດີ.

# ບົດທີ 6

## ຊັບສົມບັດກໍບໍ່ໄດ້ຜົນ

1ມີສິ່ງຊົ່ວຮ້າຍຢ່າງໜຶ່ງທີ່ຂ້າພະເຈົ້າເຫັນພາຍໃຕ້ດວງຕາເວັນ ແລະສິ່ງນັ້ນໄດ້ຖືກແກ່ມະນຸດ
ຫລາຍຄົນ: 2ຄືມະນຸດຄົນໃດທີ່ ພຣະເຈົ້າ ປະທານຊັບສົມບັດ ຄວາມຮັ່ງມີ ແລະຍົດຖາບັນດາສັກ
ໃຫ້ ຈົນສິ່ງໃດໆທີ່ລາວປາດຖະໜາສຳລັບຕົວ ຈິດໃຈລາວກໍມີຄົບບໍ່ຂາດເລີຍ ແຕ່ ພຣະເຈົ້າ ບໍ່
ໄດ້ຊົງໂຜດໃຫ້ລາວມີອຳນາດຮັບປະທານສິ່ງນັ້ນໄດ້ ຄົນນອກເຮືອນນອກເມືອງກັບໄດ້ຮັບປະ-

ທານສິ່ງນັ້ນ ອັນນີ້ກໍບໍ່ໄດ້ຜົນ ແລະເປັນຄວາມທຸກໃຈຢ່າງຮ້າຍແຮງ.
3ເຖິງວ່າມະນຸດຄົນໃດມີລູກຈັກຮ້ອຍຄົນ ແລະມີອາຍຸຍືນຍາວໄປຫລາຍປີ ຈົນວັນເດືອນປີ
ຂອງລາວກໍຫລວງຫລາຍ ແຕ່ຈິດໃຈຂອງລາວບໍ່ໄດ້ອີ່ມດ້ວຍຂອງດີ ຫລາຍກວ່ານັ້ນອີກ ລາວບໍ່
ມີງານຝັງສົບຂອງຕົນ ຂ້າພະເຈົ້າກ່າວວ່າລູກທີ່ເກີດມາຜິດເວລາ ກໍດີກວ່າຄົນນັ້ນ 4ເພາະເດັກ-
ນ້ອຍນັ້ນເກີດມາຄວາມບໍ່ໄດ້ຜົນ ແລະຕາຍໄປໃນຄວາມມືດ ແລະຊື່ຂອງລາວຖືກປົດໄວ້ໃນ
ຄວາມມືດ 5ຫລາຍກວ່ານັ້ນອີກ ຍັງບໍ່ທັນເຫັນຕາເວັນ ຫລືຍັງບໍ່ທັນຮູ້ເລື່ອງລາວຫຍັງ ເດັກນ້ອຍ
ຄົນນີ້ກໍມີຄວາມສະຫງົບສຸກຫລາຍກວ່າຜູ້ໃຫຍ່ນັ້ນອີກ 6ເອີ ເຖິງວ່າລາວມີຊີວິດຢູ່ພັນປີທະວີອີກ
ເທົ່າຕົວ ແຕ່ບໍ່ໄດ້ເຫັນຂອງດີຫຍັງ ທຸກຄົນບໍ່ໄດ້ລົງໄປບ່ອນດຽວກັນໝົດບໍ?

7 ບັນດາການງານຂອງມະນຸດກໍເພື່ອປາກຂອງຕົນ
  ແຕ່ເຖິງປານນັ້ນ ລາວກໍບໍ່ຮູ້ຈັກອີ່ມ.
8 ດ້ວຍວ່າຄົນມີສະຕິປັນຍາຈະໄດ້ປຽບອັນໃດກວ່າຄົນໂງ່
  ຫລືຄົນຍາກຈົນທີ່ຮູ້ຈັກປະພຶດຕົວຢູ່ຕໍ່ໜ້າຄົນທີ່ມີຊີວິດກໍໄດ້ປຽບອັນໃດ?
9 ສິ່ງຂອງທີ່ຕາເຫັນກໍດີກວ່າຄວາມຄຶດປາດຖະໜາຢາກໄດ້ຢ່າງນີ້ຢ່າງນັ້ນ
  ນີ້ກໍບໍ່ໄດ້ຜົນ ຄືໄລ່ຕາມລົມ.
10 ສິ່ງໃດຊຶ່ງມີຢູ່ດຽວນີ້ ລາວໄດ້ໃຊ້ຊື່ເອີ້ນສິ່ງນັ້ນມາດົນແລ້ວ
  ແລະຮູ້ກັນແລ້ວວ່າມະນຸດຄືຫຍັງ
 ແລະລາວບໍ່ອາດໂຕ້ຖຽງກັບພຣະອົງຜູ້ມີລິດທານຸພາບກວ່າຕົນໄດ້.
11 ເຫດວ່າມີສິ່ງຂອງຫລາຍ ກໍຍິ່ງຄວາມບໍ່ໄດ້ຜົນຫລາຍ
  ແລ້ວຈະເປັນປະໂຫຍດຫຍັງແກ່ມະນຸດນິດ?

12ມີຜູ້ໃດແດ່ຮູ້ວ່າສິ່ງໃດເປັນສິ່ງທີ່ດີສຳລັບມະນຸດໃນຊີວິດນີ້ ຄືໃນໄລຍະວັນເດືອນປີທັງຫລາຍ
ແຫ່ງຊີວິດອັນຊົ່ວຄາວຂອງຕົນທີ່ໄດ້ເສຍໄປເໝືອນດັ່ງເງົາ? ຫລືຜູ້ໃດອາດບອກກັບມະນຸດໄດ້ວ່າ
ສິ່ງນີ້ສິ່ງນັ້ນຈະເກີດຂຶ້ນພາຍຫລັງຕົນທີ່ຢູ່ພາຍໃຕ້ດວງຕາເວັນ?

# ບົດທີ 7

## ສິ່ງຊົ່ວຮ້າຍຕ່າງໆ ທີ່ມະນຸດພົບ ກໍເຮັດໃຫ້ຜິດຫວັງ ແລະບໍ່ສົມປາດຖະໜາ

1 ຊື່ສຽງດີກໍປະເສີດກວ່ານໍ້າມັນຫອມຢ່າງວິເສດ
  ແລະມື້ຕາຍ ກໍດີກວ່າມື້ເກີດ.
2 ໄປເຮືອນທີ່ມີການໄວ້ທຸກກໍດີກວ່າໄປເຮືອນທີ່ມີການກິນລ້ຽງກັນ
  ເພາະນັ້ນເປັນເວລາສຸດທ້າຍຂອງມະນຸດທັງປວງ
 ແລະຜູ້ທີ່ຍັງມີຊີວິດຢູ່ຈະເອົາເຫດການນັ້ນໃສ່ໄວ້ໃນໃຈ.
3 ຄວາມໂສກເສົ້າກໍດີກວ່າການຫົວເລາະ
  ເພາະຄວາມໂສກເສົ້າໃນໃບໜ້າເຮັດໃຫ້ຈິດໃຈຍິນດີ.

4 ຈິດໃຈຂອງຄົນທີ່ມີສະຕິປັນຍາຍ່ອມຢູ່ໃນເຮືອນທີ່ມີຄວາມໂສກເສົ້າ
ແຕ່ຈິດໃຈຂອງຄົນໂງ່ຍ່ອມຢູ່ໃນເຮືອນທີ່ມີຄວາມເບີກບານມ່ວນຊື່ນ.
5 ຟັງຄຳຕຳໜິຂອງຄົນທີ່ມີສະຕິປັນຍາ
ຍັງດີກວ່າຟັງເພງຂອງຄົນໂງ່.
6 ມີສຽງໜາມແຕກຢູ່ກ້ອງກົ້ນໝໍ້ສັນໃດ
ສຽງຫົວເລາະຂອງຄົນໂງ່ກໍສັນນັ້ນ ອັນນີ້ກໍບໍ່ໄດ້ຜົນ.
7 ແທ້ຈິງ ການບີບບັງຄັບເຮັດໃຫ້ຜູ້ມີສະຕິປັນຍາກາຍເປັນຄົນໂງ່ໄປ
ແລະສິນບົນກໍເຮັດໃຫ້ຄວາມເຂົ້າໃຈເສຍໄປ.
8 ເບື້ອງປາຍຂອງສິ່ງໃດສິ່ງໜຶ່ງກໍດີກວ່າເບື້ອງຕົ້ນຂອງສິ່ງນັ້ນໆ
ມີໃຈອົດກັ້ນກໍດີກວ່າມີໃຈຈອງຫອງ.
9 ຢ່າໃຫ້ໃຈຂອງເຈົ້າຮ້າຍໄວ
ເພາະຄວາມຮ້າຍມີປະຈຳຢູ່ໃນເອິກຂອງຄົນໂງ່.
10 ຢ່າຖາມວ່າ “ເຫດສັນໃດຄາວກ່ອນຈຶ່ງໄດ້ດີກວ່າຄາວນີ້”
ເພາະທີ່ເຈົ້າຖາມນັ້ນບໍ່ໄດ້ຖາມດ້ວຍສະຕິປັນຍາ.
11 ສະຕິປັນຍາປະກອບກັບມໍລະດົກກໍເປັນຂອງດີ
ການນັ້ນເປັນປະໂຫຍດແກ່ຄົນທີ່ໄດ້ເຫັນດວງຕາເວັນ.
12 ເງິນເປັນເຄື່ອງປ້ອງກັນສັນໃດ ສະຕິປັນຍາກໍເປັນເຄື່ອງປ້ອງກັນສັນນັ້ນ
ແລະຜົນປະໂຫຍດຂອງຄວາມຮູ້
ຄືສະຕິປັນຍາຍ່ອມຮັກສາຊີວິດຂອງຜູ້ທີ່ມີສະຕິປັນຍານັ້ນ.
13 ຈົ່ງພິຈາລະນາພຣະລາຊະກິດຂອງພຣະເຈົ້າ:
ສິ່ງໃດທີ່ພຣະອົງຊົງໃຫ້ຄົດຢູ່ແລ້ວ ໃຜຈະຢຽດສິ່ງນັ້ນໃຫ້ຊື່ອອກໄດ້?
14 ໃນວັນແຫ່ງຄວາມຈະເລີນ ກໍຈົ່ງຊື່ນຊົມຍິນດີ
ແຕ່ໃນວັນແຫ່ງຄວາມທຸກຍາກ ກໍຈົ່ງພິຈາລະນາ ແລະລະວັງໃຫ້ດີ
ເຫດວ່າພຣະເຈົ້າບັນດານໃຫ້ມີທັງສອງຢ່າງ ເພື່ອມະນຸດຈະບໍ່ຄົ້ນໄດ້ວ່າ
ເມື່ອລາວລ່ວງໄປແລ້ວຈະມີອັນໃດມາ.
15 ຂ້າພະເຈົ້າເຫັນສິ່ງເຫລົ່ານີ້ທັງໝົດໃນຊີວິດທີ່ບໍ່ໄດ້ຜົນຂອງຂ້າພະເຈົ້າ:
ຄືຄົນຍຸດຕິທຳຈິບຫາຍໃນຄວາມຊອບທຳຂອງຕົນ
ແລະຝ່າຍຄົນຊົ່ວຮ້າຍມີຊີວິດຍືນຍາວໃນການເຮັດຊົ່ວ.
16 ຢ່າເປັນຄົນຊອບທຳເກີນໄປ ແລະຢ່າສະຫລາດເກີນຕົວ
ເຫດໃດເຈົ້າຈຶ່ງຈະເຮັດຕົວໃຫ້ຈິບຫາຍໄປ.
17 ຢ່າຊົ່ວຫລາຍ ຫລືຢ່າເປັນຄົນໂງ່
ເປັນຫຍັງເຈົ້າຈຶ່ງຈະໄປຕາຍກ່ອນເຖິງເວລາຂອງເຈົ້າ?
18 ການທີ່ເຈົ້າຈະຍຶດຖືສິ່ງເຫລົ່ານີ້ໄວ້ ກໍດີແລ້ວ

ເຈົ້າຢ່າແບມືປ່ອຍສິ່ງນັ້ນໃຫ້ຫລຸດໄປ
ເພາະວ່າຜູ້ທີ່ຢຳເກງພຣະເຈົ້າຈະພົ້ນຈາກບັນດາສິ່ງທີ່ກ່າວມານີ້.
19 ສະຕິປັນຍາເປັນກຳລັງແກ່ຄົນສະຫລາດ
ດີກວ່າຜູ້ມີອຳນາດສິບຄົນທີ່ຢູ່ໃນເມືອງ.
20 ຈິງແທ້ ບໍ່ມີຄົນຍຸດຕິທຳຈັກຄົນດຽວເທິງແຜ່ນດິນໂລກ
ທີ່ໄດ້ປະພຶດແຕ່ຄວາມດີ ແລະບໍ່ເຮັດບາບເລີຍ.
21 ຢ່າສົນໃຈຟັງບັນດາຖ້ອຍຄຳທີ່ຄົນອື່ນກ່າວ
ຢ້ານວ່າເຈົ້າຈະໄດ້ຍິນຂ້າທາດຂອງເຈົ້າປ້ອຍດ່າຕົວເຈົ້າ.
22 ດ້ວຍວ່າເຈົ້າກໍຮູ້ແຈ້ງຢູ່ກັບໃຈຂອງເຈົ້າເອງຫລາຍເທື່ອຫລາຍທີແລ້ວວ່າ
ຕົວເຈົ້າເອງໄດ້ປ້ອຍດ່າຄົນອື່ນຄືກັນ.
23ບັນດາຂໍ້ຄວາມເຫລົ່ານີ້ຂ້າພະເຈົ້າໄດ້ພິຈາລະນາເບິ່ງດ້ວຍໃຊ້ສະຕິປັນຍາແລ້ວ:
ຂ້າພະເຈົ້າກ່າວວ່າ "ຂ້າພະເຈົ້າຈະໄດ້ປັນຍາ"
ແຕ່ປັນຍານັ້ນກັບຢູ່ຫ່າງໄກຈາກຂ້າພະເຈົ້າ.
24 ສິ່ງທີ່ຢູ່ໄກ ແລະເລິກເຫລືອເກີນ
ແມ່ນຜູ້ໃດຈະຄົ້ນອອກມາໄດ້?

25ໃຈຂ້າພະເຈົ້າຫວນກັບຄືນມາຮຽນຮູ້ ແລະຊອກຫາ ພ້ອມທັງສະແຫວງຫາສະຕິປັນຍາ
ແລະມູນເຫດຂອງສິ່ງຕ່າງໆ ເພື່ອໃຫ້ຮູ້ຄວາມຊົ່ວຮ້າຍແຫ່ງຄວາມໂງ່ຈ້າ ຄືຄວາມໂງ່ຈ້າ ແລະ
ຄວາມບ້າບໍ. 26ຂ້າພະເຈົ້າໄດ້ພົບອີກສິ່ງໜຶ່ງ ຊຶ່ງຂົມຂື່ນຫລາຍກວ່າຄວາມຕາຍ ຄືຜູ້ຍິງທີ່ມີໃຈ
ເປັນບ້ວງແຮ້ວ ແລະແຮ້ວ ມືຂອງນາງເປັນໂສ້ເຫລັກ ຄົນໃດເປັນທີ່ພໍພຣະໄທພຣະເຈົ້າ ຄົນນັ້ນ
ຈະໜີພົ້ນນາງ ແຕ່ຄົນບາບຈະຖືກຜູ້ຍິງຄົນນັ້ນຈັບເອົາໄປ.

27ປັນຍາຈານກ່າວວ່າ ເບິ່ງແມ ຂ້າພະເຈົ້າພົບດັ່ງຕໍ່ໄປນີ້ ໂດຍເອົາເລື່ອງໜຶ່ງມາປະດິດຕິດຕໍ່
ເຂົ້າກັບອີກເລື່ອງໜຶ່ງ ເພື່ອຫາມູນເຫດ 28ຊຶ່ງຈິດໃຈຂອງຂ້າພະເຈົ້າຍັງກຳລັງຫາແລ້ວຫາອີກ
ແຕ່ຂ້າພະເຈົ້າຫາບໍ່ພົບ ໃນຜູ້ຊາຍພັນຄົນຈະພົບຜູ້ຊາຍແທ້ຈັກຄົນໜຶ່ງ ແຕ່ຈະຫາຜູ້ຍິງແທ້ຈັກຄົນ
ໜຶ່ງໃນຈຳນວນຜູ້ຍິງພັນຄົນ ກໍຫາບໍ່ພົບ.

29ເບິ່ງແມ ຂ້າພະເຈົ້າພົບແຕ່ຄວາມນີ້ ຄືພຣະເຈົ້າສ້າງມະນຸດໃຫ້ເປັນຄົນທ່ຽງທຳ ແຕ່ມະນຸດ
ທັງຫລາຍໄດ້ຄົ້ນຄວ້າກົນອຸບາຍຕ່າງໆອອກມາ.

# ບົດທີ 8

## ເບິ່ງຄືວ່າຄົນຊົ່ວຈະເລີນ ໃນຂະນະທີ່ຄົນດີລົ້ມເຫລວ

1ແມ່ນຜູ້ໃດຈະເປັນເໝືອນນັກປາດ? ຫລືໃຜແດ່ຈະອະທິບາຍອັນໃດກໍໄດ້? ສະຕິປັນຍາຂອງ
ມະນຸດເຮັດໃຫ້ໃບໜ້າຂອງລາວຜ່ອງໃສ ແລະໃບໜ້າທີ່ແຂງກະດ້າງກໍປ່ຽນໄປ.

2ຂ້າພະເຈົ້າແນະນຳວ່າ ຈົ່ງຖືຮັກສາພຣະບັນຊາຂອງກະສັດ ແລະທີ່ກ່ຽວຂ້ອງກັບຄຳປະຕິ-
ຍານຕໍ່ພຣະເຈົ້າ. 3ຢ່າຮີບອອກໄປໃຫ້ພົ້ນພະພັກກະສັດ ຢ່າຢືນຢູ່ຝ່າຍຄວາມຊົ່ວຮ້າຍ ເພາະ

ກະສັດຍ່ອມກະທຳອັນໃດຕາມຊອບພະໄທພະອົງ. 4ດ້ວຍວ່າພະດຳລັດຂອງກະສັດຢູ່ທີ່ໃດ ອຳ-
ນາດກໍຢູ່ບ່ອນນັ້ນ ແລະຜູ້ໃດຈະກາບທູນຖາມພະອົງໄດ້ວ່າ “ເປັນຫຍັງພະອົງຈຶ່ງກະທຳສິ່ງນັ້ນ?”

5ຜູ້ທີ່ຮັກສາພະບັນຊາຈະບໍ່ປະສົບຄວາມຊົ່ວຮ້າຍ ແລະຈິດໃຈຂອງຄົນທີ່ມີສະຕິປັນຍາກໍເຂົ້າ-
ໃຈທັງເວລາ ແລະຄຳຕັດສິນ 6ບໍ່ວ່າແມ່ນຫຍັງກໍຕາມ ຍ່ອມມີເວລາ ແລະຄຳຕັດສິນສະນັ້ນ
ຄວາມລຳບາກຂອງມະນຸດຈຶ່ງເປັນພາລະໜັກແກ່ຕົວເອງ 7ເຫດວ່າລາວບໍ່ຮູ້ວ່າແມ່ນຫຍັງຈະເກີດ
ຂຶ້ນ ເຫດວ່າໃຜຈະບອກແກ່ລາວໄດ້ວ່າສິ່ງນັ້ນຈະເກີດຂຶ້ນເວລາໃດ? 8ບໍ່ມີມະນຸດຄົນໃດຍັບຍັ້ງ
ຈິດວິນຍານໄວ້ໄດ້ ຫລືບໍ່ມີອຳນາດອັນໃດຢູ່ເໜືອວັນຕາຍ ສົງຄາມນັ້ນຍ່ອມບໍ່ມີການປົດປ່ອຍ
ຄວາມຊົ່ວຮ້າຍຍ່ອມບໍ່ມີການປົດປ່ອຍຜູ້ທີ່ຖືກມອບໄວ້. 9ບັນດາການນີ້ ຂ້າພະເຈົ້າເຫັນໝົດແລ້ວ
ແລະຂ້າພະເຈົ້າສົນໃຈກິດຈະການທຸກຢ່າງທີ່ລາວເຮັດພາຍໃຕ້ດວງຕາເວັນ ມີເວລາໃຫ້ຄົນໜຶ່ງມີ
ອຳນາດເໜືອອີກຄົນໜຶ່ງທີ່ຈະມາເຮັດອັນຕະລາຍແກ່ຕົນ.

10ຂ້າພະເຈົ້າໄດ້ເຫັນພວກເຂົາຝັງຄົນຊົ່ວຮ້າຍ ຜູ້ຊຶ່ງເຄີຍເຂົ້າອອກສະຖານທີ່ບໍລິສຸດ ແລະຄົນ
ໃນເມືອງທີ່ພວກເຂົາໄດ້ເຮັດຊົ່ວຮ້າຍນັ້ນ ຕ່າງກໍລືມພວກເຂົາໄປໝົດ ອັນນີ້ກໍບໍ່ໄດ້ຜົນດ້ວຍ.
11ເພາະການຕັດສິນການເຮັດຊົ່ວນັ້ນ ພວກເຂົາບໍ່ໄດ້ລົງໂທດໂດຍໄວ ເຫດສະນັ້ນ ໃຈມະນຸດຈຶ່ງ
ເຈດຕະນາທີ່ຈະເຮັດຄວາມຊົ່ວ. 12ເຖິງວ່າຄົນບາບເຮັດຊົ່ວຕັ້ງຮ້ອຍເທື່ອ ແລະອາຍຸລາວຍັງຍືນ
ຍາວຢູ່ໄດ້ ເຖິງປານນັ້ນ ຂ້າພະເຈົ້າຍັງຮູ້ແນ່ວ່າ ຄວາມດີຈະມີແກ່ຄົນທັງຫລາຍທີ່ຢຳເກງພຣະ-
ເຈົ້າ ຄືຜູ້ທີ່ມີຄວາມຢຳເກງຕໍ່ພຣະພັກພຣະອົງ 13ແຕ່ວ່າຈະບໍ່ເປັນການດີແກ່ຄົນຊົ່ວຮ້າຍ ອາຍຸ
ຂອງລາວທີ່ເປັນດັ່ງເງົາຈະບໍ່ຍືນຍາວອອກໄປໄດ້ ເພາະລາວບໍ່ມີຄວາມຢຳເກງຕໍ່ພຣະພັກພຣະ-
ເຈົ້າ.

14ຍັງມີຄວາມບໍ່ໄດ້ຜົນອີກຢ່າງໜຶ່ງທີ່ເຮັດເທິງແຜ່ນດິນໂລກຄືມີຄົນຊອບທຳຮັບເຫດການອັນ
ເປັນເຫດການທີ່ຄົນຊົ່ວຮ້າຍສົມຄວນໄດ້ຮັບ ແລະມີຄົນຊົ່ວຮັບເຫດການອັນເປັນເຫດການທີ່ຄົນ
ຊອບທຳສົມຄວນໄດ້ຮັບ ຂ້າພະເຈົ້າກ່າວໄດ້ວ່າ ອັນນີ້ກໍບໍ່ໄດ້ຜົນເຊັ່ນກັນ. 15ແລ້ວຂ້າພະເຈົ້າຈຶ່ງ
ສະໜັບສະໜູນໃຫ້ຫາຄວາມເບີກບານມ່ວນຊື່ນ ດ້ວຍວ່າພາຍໃຕ້ດວງຕາເວັນ ມະນຸດບໍ່ມີຫຍັງດີ
ໄປກວ່າການກິນ ແລະດື່ມກັບຄວາມຊື່ນຊົມຍິນດີ ດ້ວຍວ່າອາການນີ້ຍັງຢູ່ໃນການງານຂອງຕົນ
ຕະຫລອດວັນເດືອນປີແຫ່ງຊີວິດຂອງຕົນ ທີ່ພຣະເຈົ້າຊົງໂຜດປະທານແກ່ຕົນພາຍໃຕ້ດວງຕາ-
ເວັນ.

16ເມື່ອຂ້າພະເຈົ້າຕັ້ງໃຈຈະເຂົ້າໃຈສະຕິປັນຍາ ແລະຮູ້ທຸລະກິດທີ່ເຮັດໃນໂລກ (ທີ່ລາວອົດ
ຫລັບອົດນອນເຮັດຕະຫລອດມື້ຕະຫລອດຄືນ) 17ແລ້ວຂ້າພະເຈົ້າຈຶ່ງເຫັນບັນດາພຣະລາຊະກິດ
ຂອງພຣະເຈົ້າວ່າ ມະນຸດຈະຄົ້ນຫາຄວາມເຂົ້າໃຈໃນພຣະລາຊະກິດທີ່ບັງເກີດຢູ່ພາຍໃຕ້ດວງ
ຕາເວັນບໍ່ໄດ້ ເພາະວ່າເຖິງແມ່ນມະນຸດຈະອອກແຮງຄົ້ນຫາຫລາຍປານໃດກໍຍັງຈະຄົ້ນຫາບໍ່ພົບ
ແລະ ຫລາຍກວ່ານັ້ນອີກ ເຖິງວ່ານັກປາດຄົນໃດຄຶດເອົາວ່າຕົນຈະເຂົ້າໃຈແລ້ວ ລາວກໍຍັງຄົ້ນ
ຫາບໍ່ພົບ.

# ບົດທີ 9

## ຫລັກການຕ່າງໆສຳລັບການດຳເນີນຊີວິດ

1ຂ້າພະເຈົ້າໄດ້ນຳເລື່ອງລາວເຫລົ່ານີ້ມາຄິດ ກວດກາພິຈາລະນາໃຫ້ໝົດວ່າ ຄົນຊອບທຳ
ແລະຄົນມີສະຕິປັນຍາ ລວມທັງກິດຈະການຂອງພວກເຂົາທັງຫລາຍ ກໍຢູ່ໃນພຣະຫັດຂອງ
ພຣະເຈົ້າ ຈະຮັກ ຫລືຈະກຽດຊັງກໍຕາມ ມະນຸດບໍ່ຮູ້ ທຸກຢ່າງກໍຢູ່ຕໍ່ໜ້າພວກເຂົາທັງຫລາຍ.
2ສິ່ງສາລະພັດຕົກແກ່ຄົນທັງປວງຄືກັນໝົດ ຄືເຫດການອັນດຽວກັນຕົກແກ່ຄົນຊອບທຳ ແລະ
ຄົນຊົ່ວ ຕົກແກ່ຄົນດີ ຕົກແກ່ຄົນສະອາດ ແລະຄົນທີ່ມີມົນທິນ ຕົກແກ່ຜູ້ທີ່ຖວາຍສັດບູຊາ ແລະ
ແກ່ຜູ້ທີ່ບໍ່ຖວາຍສັດບູຊາ ຕົກແກ່ຄົນດີຢ່າງໃດກໍຈະຕົກແກ່ຄົນບາບຢ່າງນັ້ນ ຕົກແກ່ຄົນປະຕິ-
ຍານຢ່າງໃດກໍຈະຕົກແກ່ຄົນບໍ່ກ້າປະຕິຍານຢ່າງນັ້ນ. 3ນີ້ແຫລະ ເປັນສິ່ງຊົ່ວຮ້າຍໃນບັນດາ
ເຫດການທີ່ບັງເກີດຂຶ້ນພາຍໃຕ້ດວງຕາເວັນ ຄືວ່າມີເຫດການອັນດຽວກັນທີ່ຕົກແກ່ຄົນທັງປວງ
ແລະ ຈິດໃຈມະນຸດກໍເຕັມໄປດ້ວຍຄວາມຊົ່ວ ແລະຄວາມບ້າຢູ່ໃນໃຈຂອງພວກເຂົາເມື່ອມີຊີວິດ
ແລະຕໍ່ຈາກນັ້ນ ພວກເຂົາກໍໄປຢູ່ກັບຄົນຕາຍ. 4ສ່ວນຄົນໃດທີ່ພົວພັນຢູ່ກັບຄົນທັງປວງທີ່ມີຊີວິດ
ຄົນນັ້ນກໍມີຄວາມຫວັງໃຈໄດ້ ດ້ວຍວ່າໝາທີ່ມີຊີວິດກໍຍັງດີກວ່າສິງທີ່ຕາຍແລ້ວ. 5ເພາະວ່າຄົນທີ່
ມີຊີວິດຍ່ອມຮູ້ວ່າຕົນເອງຈະຕາຍ ແຕ່ຄົນຕາຍແລ້ວກໍບໍ່ຮູ້ຫຍັງເລີຍ ພວກເຂົາບໍ່ໄດ້ຮັບລາງວັນ
ອີກ ດ້ວຍວ່າແມ່ນໃຜກໍພາກັນລືມພວກເຂົາໝົດ. 6ທັງຄວາມຮັກ ຄວາມຊັງ ແລະຄວາມອິດສາ
ຂອງພວກເຂົາໄດ້ຫາຍສາບສູນໄປແລ້ວ ໃນບັນດາເຫດການທີ່ບັງເກີດຂຶ້ນພາຍໃຕ້ດວງຕາເວັນ
ພວກເຂົາທັງຫລາຍບໍ່ມີສ່ວນຮ່ວມອີກຕໍ່ໄປ.

7ໄປສາ ໄປຮັບປະທານອາຫານຂອງເຈົ້າດ້ວຍຄວາມຊື່ນຊົມຍິນດີ ແລະໄປດື່ມນໍ້າອະງຸ່ນຂອງ
ເຈົ້າດ້ວຍໃຈຊື່ນບານ ເພາະພຣະເຈົ້າຊົງເຫັນຊອບກັບການງານຂອງເຈົ້າແລ້ວ. 8ຈົ່ງໃຫ້ເສື້ອຜ້າ
ຂອງເຈົ້າຂາວຢູ່ສະເໝີ ແລະນໍ້າມັນທີ່ຫົວຂອງເຈົ້າກໍຢ່າໃຫ້ຂາດ. 9ເຈົ້າຈົ່ງຢູ່ກິນດ້ວຍຄວາມຊື່ນ
ຊົມຍິນດີກັບເມຍ ຊຶ່ງເຈົ້າຮັກຕະຫລອດວັນເດືອນປີແຫ່ງຊີວິດອັນບໍ່ໄດ້ຜົນຂອງເຈົ້າ ຊຶ່ງພຣະອົງ
ໄດ້ປະທານໃຫ້ແກ່ເຈົ້າພາຍໃຕ້ດວງຕາເວັນ ຕະຫລອດວັນເດືອນປີທີ່ບໍ່ໄດ້ຜົນຂອງເຈົ້າ ດ້ວຍວ່າ
ນັ້ນເປັນສ່ວນໃນຊີວິດ ແລະໃນການງານຂອງເຈົ້າ ຊຶ່ງເຈົ້າໄດ້ອອກແຮງເຮັດພາຍໃຕ້ດວງຕາ-
ເວັນ. 10ມືຂອງເຈົ້າຈັບອັນໃດ ຈົ່ງເຮັດອັນນັ້ນດ້ວຍເຕັມກຳລັງຂອງເຈົ້າ ເພາະວ່າໃນແດນຄົນ
ຕາຍທີ່ເຈົ້າຈະໄປນັ້ນ ບໍ່ມີການງານ ຫລືແນວຄວາມຄິດ ຫລືຄວາມຮູ້ ຫລືສະຕິປັນຍາ.

11ຂ້າພະເຈົ້າໄດ້ເຫັນພາຍໃຕ້ດວງຕາເວັນອີກວ່າ ຄົນແລ່ນໄວຈະບໍ່ຊະນະໃນການແລ່ນແຂ່ງ
ສະເໝີໄປ ຫລືຝ່າຍມີກຳລັງກໍບໍ່ຊະນະສົງຄາມສະເໝີໄປ ຫລືຄົນສະຫລາດບໍ່ຮັບປະທານສະເໝີ
ໄປ ຫລືຄົນມີຄວາມເຂົ້າໃຈບໍ່ຮັ່ງມີສະເໝີໄປ ຫລືຜູ້ທີ່ຊ່ຽວຊານບໍ່ໄດ້ຮັບຄວາມຍິນດີສະເໝີໄປ
ແຕ່ເວລາ ແລະໂອກາດມີມາເຖິງພວກເຂົາທຸກຄົນ. 12ເພາະວ່າມະນຸດບໍ່ຮູ້ເວລາຂອງຕົນ ປາຕິດ
ຢູ່ໃນມອງສັນໃດ ແລະນົກຖືກດັກຕິດຢູ່ໃນບ້ວງແຮ້ວສັນໃດ ເວລາອັນຮ້າຍກໍມາເຖິງມະນຸດ
ພວກເຂົາກໍຖືກເວລາອັນຮ້າຍນັ້ນດັກຈັບຕິດໂດຍວ່ອງໄວຄືກັນສັນນັ້ນ.

13ຂ້າພະເຈົ້າເຫັນເລື່ອງສະຕິປັນຍາພາຍໃຕ້ດວງຕາເວັນ ເຫັນວ່າເປັນເລື່ອງໃຫຍ່ຫລາຍດັ່ງຕໍ່
ໄປນີ້. 14ຍັງມີເມືອງນ້ອຍໆເມືອງໜຶ່ງ ມີຄົນຢູ່ໃນເມືອງນັ້ນໜ້ອຍຄົນ ແລ້ວມີກະສັດອົງໃຫຍ່ມາ-

ຕີເມືອງນັ້ນ ແລະອ້ອມເມືອງນັ້ນໄວ້ ແລະສ້າງຄ້າຍອ້ອມໄວ້ຮອບເມືອງ. [15]ແຕ່ໃນເມືອງນັ້ນມີຜູ້
ຊາຍສະຫລາດແຕ່ຍາກຈົນຢູ່ຄົນໜຶ່ງແລະຜູ້ຊາຍຄົນນີ້ຊ່ວຍເມືອງນັ້ນໄວ້ໃຫ້ພົ້ນດ້ວຍປັນຍາຂອງ
ຕົນ ແຕ່ບໍ່ມີໃຜຈື່ຈຳເຖິງຊາຍຍາກຈົນຄົນນີ້ເລີຍ. [16]ແຕ່ຂ້າພະເຈົ້າວ່າ ສະຕິປັນຍາກໍດີກວ່າກຳ-
ລັງວັງຊາ ເຖິງສະຕິປັນຍາຂອງຜູ້ຊາຍຍາກຈົນຄົນນັ້ນຈະຖືກໝິ່ນປະໝາດ ແລະຖ້ອຍຄຳຂອງ
ລາວບໍ່ມີໃຜຟັງກໍຕາມ.

[17] ຖ້ອຍຄຳຂອງຄົນສະຫລາດ
ຊຶ່ງໄດ້ຍິນໃນທີ່ສະຫງັດກໍດີກວ່າສຽງຮ້ອງຂອງຜູ້ປົກຄອງໂງ່ຈ້າ.
[18] ສະຕິປັນຍາກໍດີກວ່າເຄື່ອງອາວຸດຍຸດທະພັນ
ແຕ່ຄົນບາບຄົນດຽວຍ່ອມທຳລາຍຄວາມດີໄປເປັນຈຳນວນຫລາຍໄດ້.

# ບົດທີ 10

## ຄວາມໂງ່ຈ້າ ຄວາມຊົ່ວຮ້າຍ ແລະຄວາມລົ້ມເຫລວຂອງມະນຸດ

[1] ແມງວັນຕາຍຍ່ອມເຮັດໃຫ້ເນົ່າເໝັນ ເຮັດໃຫ້ນ້ຳມັນຫອມບູດເໝັນໄດ້
ດັ່ງນັ້ນຄວາມໂງ່ຈ້າໜ້ອຍໜຶ່ງກໍເຮັດໃຫ້ຕົນເສຍຊື່ສຽງ
ໃນເລື່ອງສະຕິປັນຍາ ແລະກຽດຕິຍົດ.
[2] ຈິດໃຈຂອງຄົນທີ່ມີສະຕິປັນຍາຍ່ອມຢູ່ເບື້ອງຂວາມືຂອງຕົນ
ແຕ່ຈິດໃຈຂອງຄົນໂງ່ຍ່ອມຢູ່ເບື້ອງຊ້າຍມືຂອງຕົນ.
[3] ເມື່ອຄົນໂງ່ກຳລັງຍ່າງໄປຕາມທາງ ລາວກໍບໍ່ມີສະຕິ
ແລະລາວມັກສະແດງແກ່ທຸກຄົນວ່າຕົນເປັນຄົນໂງ່.
[4] ຖ້າໃຈຂອງເຈົ້ານາຍເກີດຮ້າຍຂຶ້ນຕໍ່ເຈົ້າ ຢ່າອອກໄປຈາກບ່ອນຂອງເຈົ້າ
ເພາະວ່າອາລົມເຢັນຍ່ອມລະງັບຄວາມຜິດອັນໃຫຍ່ຫລວງໄວ້ໄດ້.
[5] ມີສິ່ງຊົ່ວຮ້າຍທີ່ຂ້າພະເຈົ້າເຫັນພາຍໃຕ້ດວງຕາເວັນ
ອັນເປັນຄວາມຜິດຊຶ່ງມາຈາກຜູ້ມີອຳນາດ.
[6] ຄືຄົນໂງ່ຖືກແຕ່ງຕັ້ງໄວ້ໃນຕຳແໜ່ງສູງ
ແລະຄົນຮັ່ງມີຮັບຕຳແໜ່ງຕ່ຳຕ້ອຍ.
[7] ຂ້າພະເຈົ້າເຫັນຂ້າທາດຂີ່ມ້າ
ແລະເຈົ້ານາຍຍ່າງເທິງພື້ນແຜ່ນດິນເໝືອນຢ່າງຂ້າທາດ.

[8] ຜູ້ໃດຂຸດຂຸມໄວ້ ຜູ້ນັ້ນຈະຕົກລົງໃນຂຸມນັ້ນ
ຜູ້ໃດພັງຮົ້ວເຂົ້າໄປ ງູຈະກັດຜູ້ນັ້ນ.
[9] ຜູ້ໃດສະກັດຫີນ ຜູ້ນັ້ນຈະເຈັບເພາະຫີນນັ້ນ
ຜູ້ໃດຜ່າຂອນໄມ້ ຜູ້ນັ້ນຈະປະສົບອັນຕະລາຍ ເພາະຂອນໄມ້ນັ້ນ.
[10] ຖ້າຂວານປູ້ແລ້ວ ແລະລາວບໍ່ຝົນໃຫ້ຄົມ
ລາວກໍຕ້ອງອອກແຮງຫລາຍກວ່າເກົ່າ

ແຕ່ສະຕິປັນຍາຈະຊ່ວຍໃຫ້ບັນລຸຄວາມສຳເລັດ.
11 ຖ້າງູກັດກ່ອນທີ່ຈະເຮັດໃຫ້ມັນຄຸ້ນ
ໝໍງູກໍບໍ່ເປັນປະໂຫຍດຫຍັງແລ້ວ.
12 ຖ້ອຍຄຳຈາກປາກຂອງຜູ້ມີສະຕິປັນຍາ ກໍເຕັມໄປດ້ວຍຄວາມຊອບທຳ
ແຕ່ຮີມປາກຂອງຄົນໂງ່ຈະກືນຕົວເອງ.
13 ຖ້ອຍຄຳຈາກປາກຂອງລາວເປັນຄວາມໂງ່ຈ້າຕັ້ງແຕ່ເລີ່ມປາກ
ຕອນຈົບຖ້ອຍຄຳນັ້ນ ກໍເປັນຄວາມບ້າບໍ່ຢ່າງຮ້າຍແຮງ.
14 ຄົນໂງ່ເວົ້າຫລາຍຊ້ຳຊາກ ມະນຸດບໍ່ຮູ້ວ່າເຫດອັນໃດຈະບັງເກີດຂຶ້ນ
ໃຜຈະບອກລາວໄດ້ວ່າຈະມີຫຍັງເກີດຂຶ້ນເມື່ອລາວລ່ວງລັບໄປແລ້ວ.
15 ການງານຂອງຄົນໂງ່ເຮັດໃຫ້ພວກເຂົາທຸກຄົນອິດເໝື່ອຍ
ດ້ວຍວ່າລາວບໍ່ຮູ້ຈັກທາງທີ່ຈະເຂົ້າໄປໃນເມືອງ.
16 ໂອ ແຜ່ນດິນເອີຍ ວິບັດແກ່ເຈົ້າເມື່ອກະສັດຂອງເຈົ້າເປັນເດັກນ້ອຍ
ແລະເຈົ້ານາຍທັງຫລາຍຂອງເຈົ້າກິນລ້ຽງດ້ວຍຄວາມເບີກບານມ່ວນຊື່ນແຕ່ເຊົ້າ.
17 ໂອ ແຜ່ນດິນເອີຍ ຄວາມສຳລານຈະມີແກ່ເຈົ້າ
ເມື່ອກະສັດຂອງເຈົ້າເປັນລູກຄົນມີກຽດ
ແລະເຈົ້ານາຍຂອງເຈົ້າກິນລ້ຽງຕາມໂອກາດ ເພື່ອຈະມີກຳລັງວັງຊາ
ບໍ່ແມ່ນຈະດື່ມໃຫ້ມຶນເມົາ!
18 ເພາະຄວາມຂີ້ຄ້ານ ຫລັງຄາຈຶ່ງຫັກເພພັງ
ແລະເພາະມືຂີ້ຄ້ານ ເຮືອນຈຶ່ງຮົ່ວ.
19 ພວກເຂົາຈັດງານລ້ຽງໄວ້ເພື່ອໃຫ້ຄົນຫົວເລາະ
ແລະນ້ຳອະງຸ່ນເຮັດໃຫ້ຊື່ນບານ ແລະເງິນກໍຈັດໃຫ້ໄດ້ທຸກຢ່າງ.
20 ຢ່າປ້ອຍດ່າກະສັດ ແມ່ນແຕ່ຄິດດ່າໃນໃຈກໍຢ່າເລີຍ
ແລະຢ່າສາບແຊ່ງຄົນຮັ່ງມີໃນຫ້ອງນອນຂອງເຈົ້າ
ເພາະນົກໃນອາກາດຈະຄາບສຽງຂອງເຈົ້າໄປ ຫລືໂຕທີ່ມີປີກຈະເລົ່າເລື່ອງນັ້ນ.

# ບົດທີ 11

## ຄົນທຳມະດາສາມາດໄດ້ສິ່ງທີ່ດີທີ່ສຸດໄດ້

1 ຈົ່ງໂຍນເຂົ້າຈີ່ຂອງເຈົ້າລົງເທິງນ້ຳ
ເພາະອີກຫລາຍມື້ເຈົ້າຈະພົບມັນໄດ້.
2 ຈົ່ງປັນສ່ວນໜຶ່ງໃຫ້ແກ່ຄົນເຈັດຄົນ ເຖິງແປດຄົນກໍຈົ່ງໃຫ້
ເພາະເຈົ້າບໍ່ຮູ້ວ່າສິ່ງຊົ່ວຮ້າຍຢ່າງໃດຈະບັງເກີດຂຶ້ນເທິງພື້ນແຜ່ນດິນ.
3 ຖ້າບັນດາເມກມີຝົນຢູ່ເຕັມ ມັນກໍຈະຖອກເທລົງມາເທິງແຜ່ນດິນໂລກ
ແລະຖ້າຕົ້ນໄມ້ລົ້ມລົງທາງໃຕ້ ຫລືທາງເໜືອ

ມັນລົ້ມລົງບ່ອນໃດ ມັນກໍນອນຢູ່ບ່ອນນັ້ນ.
4 ຜູ້ໃດມົວສັງເກດລົມກໍຈະບໍ່ຫວ່ານພືດ
ແລະຜູ້ທີ່ເບິ່ງເມກກໍຈະບໍ່ກ່ຽວເຂົ້າ.
5 ເຈົ້າບໍ່ຮູ້ທາງຂອງລົມວ່າໄປທາງໃດ
ແລະກະດູກມີຂຶ້ນໃນມົດລູກຂອງຜູ້ຍິງແມ່ມານຢ່າງໃດ
ເຈົ້າກໍຈະບໍ່ຮູ້ເຖິງກິດຈະການຂອງ ພຣະເຈົ້າ ຜູ້ຊົງກະທຳສິ່ງສາລະພັດສັນນັ້ນ.
6 ຕອນເຊົ້າ ເຈົ້າຈົ່ງຫວ່ານພືດຂອງເຈົ້າ ແລະເມື່ອຕອນແລງ
ກໍຢ່າຫົດມືຂອງເຈົ້າ ເພາະເຈົ້າບໍ່ຮູ້ວ່າການໃດຈະຈະເລີນ
ການນີ້ຫລືການນັ້ນ ຫລືການທັງສອງຈະຈະເລີນດີຄືກັນ.
7 ແສງສະຫວ່າງເປັນທີ່ຊື່ນໃຈ
ແລະການທີ່ຕາໄດ້ເຫັນດວງຕາເວັນ ກໍເປັນທີ່ຊື່ນບານ.
8 ຖ້າຄົນໃດມີຊີວິດຢູ່ໄດ້ຕັ້ງຍືນຍາວຫລາຍປີ
ແລະລາວຊົມຊື່ນຍິນດີໃນຕະຫລອດວັນເດືອນປີເຫລົ່ານັ້ນ
ກໍຈົ່ງໃຫ້ລາວລະນຶກເຖິງວັນທີ່ມືດບົດກໍມີຫລາຍ
ບັນດາເຫດການທີ່ເກີດຂຶ້ນມານັ້ນ ກໍບໍ່ໄດ້ຜົນ.
9 ໂອ ຄົນໜຸ່ມເອີຍ ຈົ່ງຊົມຊື່ນຍິນດີໃນໄວໜຸ່ມຂອງເຈົ້າ
ແລະໃຫ້ຈິດໃຈຂອງເຈົ້າເຮັດຕົວເຈົ້າໃຫ້ຊື່ນບານໃນວັນເດືອນປີແຫ່ງໄວໜຸ່ມຂອງເຈົ້າ
ເຈົ້າຈົ່ງດຳເນີນໃນທາງແຫ່ງໃຈຂອງເຈົ້າ ແລະຕາມສາຍຕາຂອງເຈົ້າ
ແຕ່ຈົ່ງຮູ້ວ່າເນື່ອງດ້ວຍກິດຈະການງານທັງປວງເຫລົ່ານີ້
ພຣະເຈົ້າ ຈະນຳເຈົ້າເຂົ້າມາເຖິງການພິພາກສາ.
10 ສະນັ້ນ ຈົ່ງຕັດຄວາມເສົ້າໝອງອອກຈາກໃຈຂອງເຈົ້າ
ແລະຈົ່ງປະຄວາມຊົ່ວຮ້າຍອອກຈາກເນື້ອໜັງຂອງເຈົ້າ
ເພາະຄວາມໜຸ່ມສາວ ແລະໄວໜຸ່ມນັ້ນເປັນທີ່ບໍ່ໄດ້ຜົນ.

# ບົດທີ 12

## ມາດຕະຖານທີ່ສົມບູນ ເມື່ອຢູ່ໃຕ້ພຣະບັນຍັດ ກໍປາດສະຈາກພຣະຄຸນ

1 ໃນວັນເດືອນປີແຫ່ງໄວໜຸ່ມຂອງເຈົ້າ
ເຈົ້າຈົ່ງລະນຶກເຖິງພຣະຜູ້ເນລະມິດສ້າງຂອງເຈົ້າກ່ອນທີ່ຍາມທຸກຮ້ອນຈະມາເຖິງ
ແລະວັນເດືອນປີໃກ້ເຂົ້າມາ
ເມື່ອເຈົ້າຈະກ່າວວ່າ “ຂ້ອຍບໍ່ມີຄວາມມ່ວນຊື່ນໃນວັນເດືອນປີນັ້ນເລີຍ”
2 ກ່ອນທີ່ດວງຕາເວັນ ແສງສະຫວ່າງ ດວງຈັນ
ແລະດວງດາວທັງຫລາຍອັບແສງ ແລະກ່ອນທີ່ເມກກັບມາເມື່ອໝົດຝົນແລ້ວ

[3] ໃນເວລາທີ່ຄົນເຝົ້າເຮືອນຈະຕົວສັ່ນ ແລະຄົນແຂງແຮງຈະຫົດຖອຍ
ແລະຜູ້ຍິງທີ່ໂມ້ເຂົ້າຈະເຊົາໂມ້ ເພາະຈຳນວນຫລຸດໜ້ອຍລົງ
ແລະບັນດາຜູ້ທີ່ສ່ອງທາງປ່ອງຢ້ຽມຈະມືດມົວໄປ
[4] ແລະປະຕູຄູ່ທີ່ຖະໜົນຈະປິດເສຍ
ເມື່ອນັ້ນສຽງໂມ້ຄ່ອຍລົງ ເມື່ອມີສຽງນົກ ພວກເຂົາຈະລຸກຂຶ້ນ
ແລະສຽງເພງຂອງພວກເຂົາຈະຄ່ອຍໆລົງ
[5] ພວກເຂົາທັງຫລາຍຈະຢ້ານກົວບ່ອນທີ່ສູງໆ
ແລະສິ່ງທີ່ໜ້າຢ້ານກົວກໍຈະຢູ່ໃນຫົນທາງ ຕົ້ນໝາກບົກຈະມີດອກ
ແລະຕັກແຕນຈະເປັນພາລະ ຄວາມປາດຖະໜາກໍຈະຫາຍໄປ
ເພາະມະນຸດກຳລັງໄປເຮືອນອັນຖາວອນຂອງຕົນ
ສ່ວນຜູ້ໄວ້ທຸກກໍວຽນໄປມາຕາມຖະໜົນ
[6] ກ່ອນທີ່ສາຍເງິນຈະຂາດ ຫລືຊາມຄຳຈະແຕກມຸ່ນ
ຄຸນໍ້າຈະແຕກທີ່ນໍ້າພຸ ຫລືລໍ້ຈະຫັກຢູ່ຖັງນໍ້າ
[7] ແລະຂີ້ຝຸ່ນຈະກັບໄປເປັນດິນຢ່າງເດີມ
ແລະຈິດວິນຍານຈະກັບໄປສູ່ພຣະເຈົ້າຜູ້ປະທານໃຫ້ມານັ້ນ.

[8]ປັນຍາຈານກ່າວວ່າ ບໍ່ເປັນປະໂຫຍດ! ບໍ່ໄດ້ຜົນ! ສາລະພັດກໍບໍ່ໄດ້ຜົນ.

[9]ຫລາຍກວ່ານັ້ນ ເພາະປັນຍາຈານເປັນຄົນສະຫລາດແລ້ວ ເພິ່ນຍັງສອນຄວາມຮູ້ໃຫ້ປະຊາ-
ຊົນອີກດ້ວຍ ເພິ່ນພິຈາລະນາ ເພິ່ນຄົ້ນຄວ້າ ແລະຈັດສຸພາສິດຫລາຍຂໍ້ຮຽບຮ້ອຍ. [10]ປັນຍາ
ຈານຊອກຫາຖ້ອຍຄຳທີ່ມ່ວນຫູ ແລະຂຽນຖ້ອຍຄຳແຫ່ງຄວາມຈິງໄວ້ຢ່າງທ່ຽງທຳ.

[11]ຖ້ອຍຄຳຂອງນັກປາດເປັນເໝືອນໄມ້ເທົ້າ ແລະເປັນເໝືອນດັ່ງຕະປູທີ່ເພິ່ນໄດ້ຕອກໄວ້ຢ່າງ
ແໜ້ນ. [12]ແລະຫລາຍກວ່ານັ້ນອີກ ລູກຊາຍຂອງຂ້າພະເຈົ້າເອີຍ: ຈົ່ງຮັບເອົາຄຳຕັກເຕືອນສາ
ຊຶ່ງຈະເຮັດໜັງສືຫລາຍກໍບໍ່ມີສິ້ນສຸດ ແລະຮຽນຫລາຍກໍເມື່ອຍເນື້ອໜັງ.

[13]ບັດນີ້ ເມື່ອຟັງທັງໝົດແລ້ວ ສະຫລຸບແລ້ວ ຄືຈົ່ງຢຳເກງພຣະເຈົ້າ ແລະຮັກສາພຣະບັນ-
ຍັດຂອງພຣະອົງ ເພາະນີ້ແຫລະເປັນໜ້າທີ່ທັງໝົດຂອງມະນຸດ.

[14]ດ້ວຍວ່າພຣະເຈົ້າຈະເອົາການງານທຸກປະການເຂົ້າສູ່ການພິພາກສາ ພ້ອມດ້ວຍສິ່ງທີ່ລັບລີ້
ທຸກຢ່າງ ບໍ່ວ່າດີ ຫລືຊົ່ວ.

* * *

# ຍອດເພງ

## ບົດທີ 1

1 ບົດເພງອັນໜ້າອອນຊອນຂອງກະສັດ ໂຊໂລໂມນ.

### ບົດເພງທີໜຶ່ງ

*ຍິງສາວ:*

2 ປາກຂອງອ້າຍໄດ້ຈູບນ້ອງ
ຄວາມຮັກຂອງອ້າຍຫວານກວ່ານໍ້າອະງຸ່ນ.
3 ຕົວອ້າຍມີກິ່ນຫອມຫວນ
ຊື່ຂອງອ້າຍພາໃຫ້ນ້ອງຄິດເຖິງກິ່ນຫອມນັ້ນ
ແລະບໍ່ມີຍິງໃດທີ່ຈະບໍ່ຮັກອ້າຍ.
4 ຂໍໃຫ້ນ້ອງໄປກັບອ້າຍ ແລະພວກເຮົາພາກັນໜີ
ຈົ່ງເປັນພະລາຊາຂອງນ້ອງ ແລະພານ້ອງເຂົ້າໄປໃນຫ້ອງນອນຂອງອ້າຍ
ຖ້າວ່າອ້າຍຢູ່ທີ່ນີ້ ພວກເຮົາທັງສອງກໍຈະມີຄວາມສຸກ
ພວກເຮົາດື່ມນໍ້າອະງຸ່ນ ແລະຊື່ນຊົມໃນຄວາມຮັກ
ນ້ອງພໍໃຈທີ່ສຸດທີ່ໄດ້ຮັກກັບອ້າຍ.
5 ຍິງນະຄອນ ເຢຣູຊາເລັມ ເອີຍ ແສງຕາເວັນເຮັດໃຫ້ຂ້ອຍແຫລ້ ແຕ່ຍັງງາມຢູ່
ຕົວຂອງອ້າຍເປັນສີນໍ້າຕານ ເໝືອນດັ່ງຜ້າເຕັນກາງໄວ້ໃນຖິ່ນແຫ້ງແລ້ງກັນດານ
ແລະມີສີເໝືອນດັ່ງຜ້າກັ້ງໃນພະລາຊະວັງກະສັດ ໂຊໂລໂມນ.
6 ຢ່າຫລຽວເບິ່ງຢ່າງດູໝິ່ນໃນສີຜິວພັນຂອງຂ້ອຍ
ເພາະຕາເວັນໄດ້ແຜດເຜົາຂ້ອຍ
ອ້າຍນ້ອງຂອງຂ້ອຍ ໃຈຮ້າຍຂ້ອຍ
ແລະໃຊ້ຂ້ອຍເຮັດວຽກຢູ່ໃນສວນອະງຸ່ນ
ຂ້ອຍຈຶ່ງບໍ່ມີເວລາຮັກສາຕົວຂ້ອຍເອງ.
7 ທີ່ຮັກຂອງນ້ອງເອີຍ ກະລຸນາບອກນ້ອງແດ່ວ່າ
ອ້າຍຈະພາຝູງສັດຂອງອ້າຍໄປກິນຫຍ້າຢູ່ບ່ອນໃດ?
ເວລາຕາເວັນທ່ຽງອ້າຍພາພວກມັນຢຸດພັກຢູ່ໃສ?
ເປັນຫຍັງນ້ອງຈຶ່ງຕ້ອງຊອກຫາອ້າຍ
ຢູ່ທ່າມກາງຝູງສັດຂອງພວກຜູ້ລ້ຽງແກະຄົນອື່ນ?

*ຄົນຮັກຂອງນາງ:*

8 ຍິງງາມເດັ່ນໃນທ່າມກາງຍິງທັງຫລາຍເອີຍ
ຖ້ານ້ອງບໍ່ຮູ້ຈັກບ່ອນ ຈົ່ງຕິດຕາມຝູງສັດນັ້ນໄປ

ແລ້ວນ້ອງຈະພົບເດີ່ນຫຍ້າສຳລັບຝູງແບ້ຂອງນ້ອງ
ຢູ່ໃກ້ຜ້າເຕັນຂອງພວກລ້ຽງແກະພຸ້ນ.
9 ທີ່ຮັກຂອງອ້າຍເອີຍ ນ້ອງປຽບເໝືອນມ້າແມ່ທີ່ທຽມລົດມ້າ
ຂອງຟາຣາໂອກະສັດແຫ່ງເອຢິບ.
10 ນ້ອງເປຍຜົມງາມ ແລະຍ່ອນລົງຕາມຄໍດັ່ງເພັດພອຍ.
11 ແຕ່ວ່າອ້າຍຈະເອົາສາຍສ້ອຍຄຳກັບເຄື່ອງເອ້ທີ່ເຮັດດ້ວຍເງິນໃຫ້ນ້ອງ.

*ຍິງສາວ:*

12 ໃນຂະນະທີ່ເຈົ້າຊີວິດຢູ່ເທິງຕຽງນອນ
ກິ່ນນ້ຳຫອມຂອງຂ້ອຍໄດ້ສົ່ງກິ່ນຫອມໄປ.
13 ຄົນຮັກຂອງຂ້ອຍເໝືອນດັ່ງຢາງໄມ້ຫອມ
ທີ່ວາງໄວ້ຢູ່ເທິງເອິກຂອງຂ້ອຍ.
14 ຄົນຮັກຂອງຂ້ອຍເປັນເໝືອນດອກໄມ້ປ່າ
ຊຶ່ງບານຢູ່ໃນສວນອະງຸ່ນທີ່ເມືອງເອັນ-ເກດີ.

*ຄົນຮັກຂອງນາງ:*

15 ທີ່ຮັກຂອງອ້າຍເອີຍ ນ້ອງເປັນຍິງທີ່ງົດງາມທີ່ສຸດ
ຕາຂອງນ້ອງສ່ອງແສງດ້ວຍຄວາມຮັກ.

*ຍິງສາວ:*

16 ສຸດທີ່ຮັກຂອງນ້ອງເອີຍ ອ້າຍເປັນຊາຍສະຫງ່າງາມ
ແລະເຕັມໄປດ້ວຍຄວາມສຳລານ
ຫຍ້າຂຽວສົດຈະເປັນຕຽງນອນຂອງພວກເຮົາ.
17 ຕົ້ນສົນຈະເປັນເສົາເຮືອນຂອງພວກເຮົາ
ແລະໄມ້ສົນຈະເປັນເພດານຂອງມັນ.

# ບົດທີ 2

1 ນ້ອງເປັນພຽງດອກກຸຫລາບປ່າຢູ່ໃນທົ່ງຊາໂຣນ
ແລະເປັນດອກຊ້ອນຢູ່ຕາມຮ່ອມພູ.

*ຄົນຮັກຂອງນາງ:*

2 ດອກຊ້ອນຢູ່ກາງໜາມສັນໃດ
ກໍເໝືອນຄົນຮັກຂອງອ້າຍຢູ່ໃນທ່າມກາງຜູ້ຍິງອື່ນສັນນັ້ນ.

*ຍິງສາວ:*

3 ເມື່ອປຽບທຽບຄົນຮັກຂອງຂ້ອຍກັບຊາຍຄົນອື່ນ
ກໍເໝືອນຕົ້ນໝາກໂປມທີ່ຢູ່ທ່າມກາງຕົ້ນໄມ້ກາງປ່າ
ຂ້ອຍຢາກນັ່ງຢູ່ກ້ອງຮົ່ມຂອງມັນ

ແລະໝາກຂອງມັນກໍຫວານຖືກປາກຂ້ອຍ.
4 ລາວພາຂ້ອຍໄປໃນງານກິນລ້ຽງ
ແລະຍົກທຸງແຫ່ງຄວາມຮັກປົກຫຸ້ມຂ້ອຍໄວ້.
5 ລາວເຮັດໃຫ້ຂ້ອຍມີເຫື່ອແຮງດ້ວຍກິນໝາກອະງຸ່ນ
ແລະເຮັດໃຫ້ຂ້ອຍຊື່ນໃຈດ້ວຍກິ່ນໝາກໂປມ
ຂ້ອຍອ່ອນເພຍໄປດ້ວຍຄວາມຫລົງໄຫລ.
6 ລາວເອົາມືກ້ຳຊ້າຍຮອງຫົວຂ້ອຍ
ແລະເອົາມືກ້ຳຂວາກອດຂ້ອຍໄວ້.
7 ຍິງນະຄອນ ເຢຣູຊາເລັມ ເອີຍ ຈົ່ງສັນຍາກັບຂ້ອຍເທີ້ນວ່າ,
“ໃນນາມຂອງກວາງ ແລະເຍືອງ
ເຈົ້າຈະບໍ່ປຸກຄວາມຮັກຂອງຂ້ອຍກ່ອນເວລາອັນສົມຄວນ.”

## ບົດເພງທີສອງ

*ຍິງສາວ:*

8 ຂ້ອຍໄດ້ຍິນສຽງຄົນຮັກຂອງຂ້ອຍ
ລາວກຳລັງແລ່ນຢູ່ເທິງພູນ້ອຍ
ແລະຟ້າວຂ້າມພູນ້ອຍມາຫາຂ້ອຍ.
9 ຄົນຮັກຂອງຂ້ອຍປຽບເໝືອນເຍືອງ
ແລະປຽບເໝືອນກວາງໜຸ່ມ
ນີ້ເດ ລາວກຳລັງຢືນຢູ່ທາງຫລັງຝາເຮືອນຂ້ອຍ
ລາວຫລຽວເຂົ້າມາທາງປ່ອງຢ້ຽມ
ແລະຄອຍຈອບເບິ່ງຂ້ອຍຕາມປ່ອງໄມ້ສານ.
10 ຄົນຮັກຂອງຂ້ອຍໄດ້ເອີ່ຍປາກຕໍ່ຂ້ອຍວ່າ,

*ຄົນຮັກຂອງນາງ:*

ທີ່ຮັກຂອງຂ້ອຍຈົ່ງມາຫາງພີ້
ສຸດທີ່ຮັກຂອງອ້າຍຈົ່ງມານຳອ້າຍ.
11 ລະດູໜາວໄດ້ຜ່ານໄປ ຝົນກໍເຊົາຕົກ.
12 ຢູ່ຕາມຊົນນະບົດມີດອກໄມ້ເບັ່ງບານອອກມາ
ນີ້ເປັນເວລາສຳລັບຮ້ອງລຳທຳເພງ
ສຽງນົກເຂົາຂັນກໍໄດ້ຍິນໄປທົ່ວທົ່ງນາ.
13 ໝາກເດື່ອກຳລັງເລີ່ມສຸກ
ນ້ອງຈະໄດ້ດົມກິ່ນຂອງດອກອະງຸ່ນ
ທີ່ຮັກຂອງອ້າຍ ຈົ່ງມາພີ້
ສຸດທີ່ຮັກຂອງອ້າຍ ຈົ່ງມາກັບອ້າຍ.

14 ນ້ອງກຳລັງລີ້ຊ່ອນຕົວຢູ່ດັ່ງນົກເຂົາ
ຢູ່ໃນຊ່ອງວ່າງຂອງກ້ອນຫີນ
ຂໍໃຫ້ອ້າຍເຫັນໜ້າອັນເປັນຕາຮັກຂອງນ້ອງ
ແລະຂໍໃຫ້ອ້າຍໄດ້ຍິນສຽງເວົ້າອັນມີສະເໜ່ຂອງນ້ອງແດ່.
15 ຈົ່ງຈັບພວກໝາຈອກ ພວກໝາຈອກນ້ອຍ
ກ່ອນທີ່ພວກມັນຈະທຳລາຍສວນອະງຸ່ນຂອງພວກເຮົາທີ່ກຳລັງເບັ່ງບານ.

*ຍິງສາວ:*

16 ຄົນຮັກເປັນຂອງຂ້ອຍ ແລະຂ້ອຍກໍເປັນຂອງລາວ
ລາວລ້ຽງຝູງສັດຂອງລາວຢູ່ທ່າມກາງບ່ອນທີ່ມີດອກຊ້ອນ.
17 ຈົນຮອດຕອນເຊົ້າ ຊຶ່ງມີລົມພັດມາອ່ອນໆ
ແລະຈົນເຖິງຄວາມມືດມົວໄດ້ຈືດຈາງຫາຍໄປ
ສຸດທີ່ຮັກຂອງຂ້ອຍເອີຍ ຈົ່ງກັບມາເໝືອນເຍືອງ
ແລະເໝືອນກວາງໜຸ່ມທີ່ຢູ່ເທິງພູ.

# ບົດທີ 3

## ເຈົ້າສາວຊອກຫາເຈົ້າບ່າວ ແລະໄດ້ພົບກັບເຈົ້າບ່າວ

1 ຍາມກາງຄືນ ເທິງຕຽງຂອງຂ້ອຍໄດ້ຊອກຫາຜູ້ທີ່ດວງໃຈຂອງຂ້ອຍຮັກ
ຂ້ອຍຊອກຫາລາວ ແຕ່ຫາບໍ່ພົບ
2 "ບັດນີ້ຂ້ອຍຈະລຸກຂຶ້ນ ແລ້ວຈະທ່ຽວໄປອ້ອມຮອບເມືອງໄປຕາມຖະໜົນ
ແລະໃນທີ່ສາທາລະນະ ຂ້ອຍຈະຊອກຫາຜູ້ນັ້ນທີ່ດວງໃຈຂອງຂ້ອຍຮັກ"
ຂ້ອຍໄດ້ຊອກຫາລາວ ແຕ່ຫາບໍ່ພົບ
3 ພວກທີ່ເຝົ້າຍາມໃນເມືອງນັ້ນໄດ້ພົບຂ້ອຍ ແລ້ວຂ້ອຍຖາມພວກເຂົາວ່າ
"ໝູ່ເຈົ້າເຫັນຜູ້ນັ້ນທີ່ດວງໃຈຂອງຂ້ອຍຮັກບໍ?"
4 ເມື່ອຂ້ອຍຜ່ານຜູ້ເຝົ້າຍາມມາໜ້ອຍໜຶ່ງ
ຂ້ອຍກໍໄດ້ພົບຜູ້ນັ້ນທີ່ດວງໃຈຂອງຂ້ອຍຮັກ
ຂ້ອຍໄດ້ຈັບຕົວລາວໄວ້ແໜ້ນ ແລະບໍ່ຍອມປ່ອຍໃຫ້ລາວຫລຸດໄປເລີຍ
ຈົນຂ້ອຍພາລາວເຂົ້າມາໃນເຮືອນຂອງແມ່ຂ້ອຍ
ແລະໃຫ້ເຂົ້າມາໃນຫ້ອງ ຊຶ່ງແມ່ຂອງຂ້ອຍໄດ້ເກີດຂ້ອຍ
5 ໂອ ລູກສາວທັງຫລາຍຂອງເມືອງເຢຣູຊາເລັມເອີຍ
ຂ້ອຍຂໍໃຫ້ນາງທັງຫລາຍປະຕິຍານຕໍ່ໂຕເຍືອງ
ຫລືກວາງໂຕແມ່ໃນທົ່ງວ່າ ຢ່າຊູ່ປຸກ ຢ່າຊູ່ປຸກ
ຄວາມຮັກໃຫ້ຕື່ນຈົນກວ່າມັນຈະມີຈິດໃຈພ້ອມແລ້ວ

## ການຍົກຍ້ອງເຈົ້າບ່າວກັບເພື່ອນໆ

6 “ຜູ້ໃດໜໍທີ່ກຳລັງຂຶ້ນມາຈາກຖິ່ນແຫ້ງແລ້ງກັນດານເບິ່ງຄືເສົາຄວັນໄຟ
ຫອມໄປດ້ວຍຢາງໄມ້ຫອມ ແລະກຳຍານ ແລະບັນດາເຄື່ອງຫອມຂອງພວກພໍ່ຄ້າ?
7 ເບິ່ງແມ ເປັນຕຽງນອນຂອງກະສັດໂຊໂລໂມນ
ມີຄົນທີ່ແຂງແຮງ 60 ຄົນ ໃນທ່າມກາງຊາວອິສຣາເອນອ້ອມຮອບຕຽງນອນນັ້ນ.
8 ພວກເຂົາຖືດາບ ແລະເປັນຜູ້ຊຳນານໃນການເຮັດເສິກ
ພວກເຂົາທຸກຄົນເໜັບດາບໄວ້ຢູ່ກົກຂາຂອງຕົນ
ເພາະຢ້ານໄພອັນຕະລາຍໃນກາງຄືນ
9 ກະສັດໂຊໂລໂມນໄດ້ເອົາໄມ້ມາຈາກພູເລບານອນ
ສ້າງຕຽງນອນດ້ວຍຕົວພະອົງເອງ
10 ພະອົງຊົງເຮັດເສົາຕຽງນັ້ນດ້ວຍເງິນ ແລະບ່ອນອີງເຮັດດ້ວຍທອງຄຳ
ແລະບ່ອນນັ່ງທາດ້ວຍສີມ່ວງ ຂ້າງໃນນັ້ນໂອບໄວ້ດ້ວຍຄວາມຮັກ
ໂດຍບຸດສາວຂອງເມືອງເຢຣູຊາເລັມ
11 ໂອ ບຸດສາວແຫ່ງຊີໂອນເອີຍ ຈົ່ງອອກມາສາ ໄປເບິ່ງກະສັດໂຊໂລໂມນ
ຖືມົງກຸດ ຊຶ່ງແມ່ຂອງພະອົງໄດ້ສວມໃຫ້
ໃນມື້ທີ່ພະອົງໄດ້ຊົງອະພິເສກມະເຫສີນັ້ນ
ໃນມື້ທີ່ພະໄທຂອງພະອົງຊົງເບີກບານ”

# ບົດທີ 4

## ເຈົ້າບ່າວຍົກຍ້ອງເຈົ້າສາວ

1 ທີ່ຮັກຂອງອ້າຍເອີຍ ເບິ່ງແມ ນາງຊ່າງສວຍງາມ ເບິ່ງນາງສວຍງາມຫລາຍ
ດວງຕາຂອງນາງເໝືອນດັ່ງນົກເຂົາຢູ່ໃນຜ້າຄຸມ
ຜົມຂອງນາງເໝືອນດັ່ງຝູງແບ້ທີ່ເຄື່ອນມາຕາມເນີນພູເຂົາກີເລອາດ
2 ແຂ້ວຂອງນາງເໝືອນດັ່ງຝູງແກະທີ່ຕັດຂົນແລ້ວ ທີ່ຫາກໍຂຶ້ນມາຈາກການຊຳລະລ້າງ
ມີລູກແຝດຕິດມາທຸກ ໂຕ ແລະຫາໂຕໃດເປັນໝັນກໍບໍ່ມີ
3 ຮີມປາກຂອງນາງແດງເໝືອນດັ່ງດ້າຍສີແດງສົດ
ແລະຄຳເວົ້າຂອງນາງກໍມ່ວນອອນຊອນ
ຂະໝັບຂອງນາງເປັນຄືໝາກພິລາຜ່າເຄິ່ງຢູ່ໃນຜ້າຄຸມ
4 ລຳຄໍຂອງນາງເໝືອນດັ່ງຫໍປ້ອມຂອງກະສັດດາວິດທີ່ໄດ້ກໍ່ສ້າງໄວ້
ເພື່ອຈະຫ້ອຍເຄື່ອງອາວຸດ ມີໂລ່ພັນອັນທີ່ຫ້ອຍ ຢູ່ທີ່ນັ້ນ
ທັງໝົດເປັນໂລ່ຂອງທະຫານ
5 ນົມທັງສອງຂອງນາງເໝືອນດັ່ງລູກຟານແຝດຂອງເຍືອງໂຕໜຶ່ງ
ທີ່ກິນຫຍ້າໃນທ່າມກາງໝູ່ດອກບົວ

6 ຈົນຮຸ່ງເຊົ້າມາ ແລະເງົາມືດຫາຍໄປ
ຂ້ອຍຈະໄປເທິງພູທີ່ມີຢາງໄມ້ຫອມ ແລະໂນນພູທີ່ມີກຳຍານ
7 ໂອ ທີ່ຮັກຂອງຂ້ອຍເອີຍ ເຈົ້າງາມໄປໝົດທຸກສິ່ງ
ໃນຕົວເຈົ້າຈະຫາບ່ອນຕຳໜິໜ້ອຍໜຶ່ງກໍບໍ່ມີ
8 ຈາກ ເລບານອນ ມາກັບອ້າຍສາ ເຈົ້າສາວຂອງຂ້ອຍ
ຈົ່ງຈາກ ເລບານອນ ແລ້ວໄປກັບອ້າຍ ໃຫ້ເບິ່ງລົງຈາກຍອດເຂົາ ອາມານາ
ຈາກຍອດພູເຂົາ ເສນີ ແລະຈາກຍອດພູເຂົາ ເຮີໂມນ,
ຈາກບັນດາຖໍ້າສິງ ຈາກພູເສືອດາວທັງຫລາຍ
9 ນ້ອງສາວຂອງອ້າຍເອີຍ ນ້ອງໄດ້ປຸ້ນເອົາດວງໃຈຂອງອ້າຍໄປແລ້ວ
ເຈົ້າສາວຂອງອ້າຍເອີຍ
ເຈົ້າໄດ້ປຸ້ນເອົາດວງໃຈຂອງອ້າຍໄປດ້ວຍສາຍຕາພຽງແວບດຽວເທົ່ານັ້ນ
ດ້ວຍສ້ອຍຄໍສາຍດຽວຂອງເຈົ້າ
10 ນ້ອງສາວຂອງອ້າຍເອີຍ ເຈົ້າສາວຂອງອ້າຍເອີຍ
ຄວາມຮັກທັງຫຼາຍຂອງເຈົ້າຊ່າງຫວານເຫຼືອເກີນ
ຄວາມຮັກຂອງເຈົ້ານັ້ນດີກວ່ານໍ້າອະງຸ່ນ
ແລະກິ່ນນໍ້າມັນຂອງນາງຊ່າງຫອມກວ່າເຄື່ອງຫອມເທດທັງຫລາຍ
11 ໂອ ເຈົ້າສາວຂອງອ້າຍເອີຍ ຮີມປາກຂອງນ້ອງເໝືອນດັ່ງນໍ້າເຜີ້ງກຳລັງຈະຍ້ອຍ
ໃຕ້ລີ້ນຂອງນ້ອງ ມີນໍ້າເຜີ້ງ ແລະນໍ້ານົມ
ກິ່ນເສື້ອຜ້າຂອງນ້ອງຫອມຄືກິ່ນຂອງພູ ເລບານອນ
12 ເຈົ້າສາວຂອງອ້າຍເອີຍ ນ້ອງເປັນສວນທີ່ມີຄ້າຍອ້ອມຮອບໄວ້
ເປັນນໍ້າຄຳທີ່ອັດໄວ້ເປັນນໍ້າພຸທີ່ຖືກປະທັບຕາໄວ້
13 ຜິນລະປູກຂອງນ້ອງເປັນສວນທີ່ມີກົກໝາກພິລາ
ແລະໝາກໄມ້ຊະນິດຕ່າງໆທີ່ຫວານຫລາຍ
ມີທັງດອກທຽນຂາວ ແລະນໍ້າມັນຫອມ
14 ມີນໍ້າມັນຫອມ ແລະມີໄມ້ອໍ້ຫອມ ຕົ້ນສີໄຄ ແລະອົບເຊີຍ
ອີກທັງບັນດາຕົ້ນໄມ້ສຳລັບເຮັດກຳຍານ
ຄືຕົ້ນຢາງໄມ້ຫອມ ແລະຕົ້ນອາໂລ ອີກທັງເຄື່ອງຫອມຊັ້ນຢ້ຽມທັງປວງ
15 ຕົວນ້ອງເປັນນໍ້າພຸທີ່ຢູ່ໃນສວນ
ເປັນບໍ່ນໍ້າແຫ່ງຊີວິດທີ່ໄຫລມາຈາກພູ ເລບານອນ

## ການຂໍຮ້ອງຂອງເຈົ້າສາວ

16 ໂອ ລົມທິດເໜືອເອີຍ ຈົ່ງຕື່ນຂຶ້ນເຖີດ
ໂອ ລົມທິດໃຕ້ເອີຍ ຈົ່ງພັດມາ ສວນຂອງຂ້ອຍ
ເພື່ອຂອງຫອມໃນສວນນັ້ນຈະຫອມກຸ້ມກະຈາຍອອກໄປ

"ຂໍໃຫ້ທີ່ຮັກຂອງຂ້ອຍເຂົ້າມາໃນສວນຂອງລາວ
ແລະຮັບປະທານໝາກໄມ້ທີ່ແສນຫວານຂອງລາວເທີ້ນ"

# ບົດທີ 5

## ຄຳຕອບຂອງເຈົ້າບ່າວ

1 "ນ້ອງສາວຂອງອ້າຍເອີຍ ເຈົ້າສາວຂອງອ້າຍເອີຍ
ອ້າຍເຂົ້າມາໃນສວນຂອງອ້າຍແລ້ວ
ອ້າຍມາເກັບເອົາຢາງໄມ້ຫອມຂອງອ້າຍ
ພ້ອມກັບເຄື່ອງຫອມທັງຫລາຍຂອງອ້າຍ
ອ້າຍໄດ້ກິນຮັງເຜີ້ງກັບນໍ້າເຜີ້ງຂອງອ້າຍແລ້ວ
ອ້າຍໄດ້ດື່ມນໍ້າອະງຸ່ນກັບນໍ້ານົມຂອງອ້າຍແລ້ວ
ໂອ ສະຫາຍທັງຫລາຍ ຈົ່ງກິນ ແລະຈົ່ງດື່ມ ພວກທ່ານຜູ້ເປັນທີ່ຮັກເອີຍ
ຈົ່ງດື່ມໃຫ້ອີ່ມໜຳຫ້ອນ"

## ເຈົ້າສາວໄດ້ຍິນຄຳຕອບຂອງເຈົ້າບ່າວຈຶ່ງຕື່ນຂຶ້ນ

2 "ຂ້ອຍຫລັບແລ້ວ ແຕ່ໃຈຂອງຂ້ອຍຍັງຕື່ນຢູ່
ຄືມີສຽງປາກຂອງທີ່ຮັກຂອງຂ້ອຍ ພວມເຄາະປະຕູ
ເວົ້າວ່າ ນ້ອງສາວເອີຍ ທີ່ຮັກຂອງອ້າຍເອີຍ
ນົກກາງແກຂອງອ້າຍເອີຍ ຍິງຜູ້ດີທີ່ສຸດຂອງອ້າຍເອີຍເປີດປະຕູໃຫ້ອ້າຍແດ່
ເພາະຫົວຂອງອ້າຍປຽກດ້ວຍນໍ້າໝອກ
ແລະເສັ້ນຜົມຂອງອ້າຍຂ້ອຍກໍຊຸ່ມດ້ວຍລະອອງນໍ້າຟ້າແຫ່ງລາຕີ"
3 ຂ້ອຍໄດ້ແກ້ເສື້ອຊັ້ນນອກອອກແລ້ວ ຂ້ອຍຈະສວມນຸ່ງອີກຢ່າງໃດໄດ້
ຂ້ອຍໄດ້ລ້າງຕີນຂອງຂ້ອຍແລ້ວ ຂ້ອຍຈະໃຫ້ຕີນກັບໄປເປື້ອນເປີອີກບໍ?
4 ທີ່ຮັກຂອງຂ້ອຍໄດ້ສອດມືຂອງລາວເຂົ້າມາທາງປ່ອງຢ້ຽມ
ແລະທ້ອງຂອງຂ້ອຍກໍສະທ້ານສະເທືອນເພາະເຫັນແກ່ລາວ
5 ຂ້ອຍໄດ້ລຸກຂຶ້ນໄປເປີດປະຕູໃຫ້ທີ່ຮັກຂອງຂ້ອຍ
ແລະຢາງໄມ້ຫອມໄດ້ຍ້ອຍລົງຈາກມືຂອງຂ້ອຍ
ແລະນໍ້າຢາງໄມ້ຫອມໄດ້ຍ້ອຍລົງຈາກນິ້ວມືຂອງຂ້ອຍເທິງໄລປະຕູ

## ເຈົ້າສາວຊອກຫາເຈົ້າບ່າວ

6 ຂ້ອຍເປີດປະຕູໃຫ້ທີ່ຮັກຂອງຂ້ອຍ ແຕ່ທີ່ຮັກຂອງຂ້ອຍໄດ້ໜີໄປແລ້ວ
ລາວໄດ້ກາຍໄປແລ້ວ ເວລາລາວໄດ້ເວົ້າກັບຂ້ອຍ
ຂ້ອຍໄດ້ລືມຄິງໄປ ຂ້ອຍໄດ້ຊອກຫາລາວ ແຕ່ຂ້ອຍຫາລາວບໍ່ພົບ
ຂ້ອຍຮ້ອງ ເອີ້ນລາວ ແຕ່ລາວບໍ່ໄດ້ຂານຕອບ
7 ພວກທີ່ເຝົ້າຍາມເມືອງໄດ້ພົບຂ້ອຍ ພວກເຂົາຕີຂ້ອຍຈົນບາດເຈັບ

ພວກຄົນຍາມຮັກສາກຳແພງເມືອງໄດ້ຖອດຜ້າຄຸມຕົວອອກຈາກຂ້ອຍໄປ
8 ໂອ ບຸດສາວຂອງເມືອງ ເຢຣູຊາເລັມ ເອີຍ
ຂ້ອຍຂໍໃຫ້ພວກນາງປະຕິຍານວ່າ
ຖ້າພວກນາງ ຄົນໃດໄດ້ພົບທີ່ຮັກຂອງຂ້ອຍ
ນາງຈະຮັບປາກບອກລາວວ່າ
ຂ້ອຍປ່ວຍເປັນພະຍາດຮັກ
9 "ໂອ ຍິງຜູ້ງາມລ້ຳເລີດໃນທ່າມກາງພວກຜູ້ສາວອື່ນໆເອີຍ
ຄູ່ຮັກຂອງນາງນັ້ນ ມີຫຍັງດີກວ່າຄູ່ຮັກຂອງຄົນອື່ນໆ
ຄູ່ຮັກຂອງນາງນັ້ນວິເສດຫຍັງໄປກວ່າຄູ່ຮັກຂອງຄົນອື່ນບໍ?
ນາງຈຶ່ງໄດ້ມາໃຫ້ພວກ ຂ້ອຍປະຕິຍານໃຫ້ເຊັ່ນນັ້ນ

## ເຈົ້າສາວຍົກຍ້ອງເຈົ້າບ່າວ

10 "ທີ່ຮັກຂອງຂ້ອຍເປັນສີຂາວ ແລະສີແດງເລືອດ
ລາວເປັນເອກໃນທ່າມກາງໝື່ນຄົນ
11 ຫົວຂອງລາວເໝືອນທອງຄຳທີ່ລະອຽດ
ຜົມຂອງລາວກໍຍາວລົງ ແລະດຳເໝືອນນົກກາ
12 ຕາຂອງລາວຄືນົກກາງແກທີ່ແຄມຫ້ວຍ
ຊຶ່ງອາບແລ້ວດ້ວຍນ້ຳນົມ ແລະຈັບຢູ່ທີ່ກະແສນ້ຳເຕັມຝັ່ງ
13 ແກ້ມຂອງລາວຄືສວນເຄື່ອງຫອມ ຄືກະຕ່າຍທີ່ເຕັມໄປດ້ວຍດອກໄມ້ຫອມ
ສົບປາກຂອງລາວເໝືອນດອກບົວທີ່ຢົດນ້ຳຫອມໃສ
14 ມືຂອງລາວຄືວົງແຫວນທອງຄຳທີ່ປະດັບດ້ວຍພອຍຂຽວ
ທ້ອງຂອງລາວຄືເສົາງາຊ້າງກ້ຽງເຫຼື້ອມ ແລະ ປະດັບດ້ວຍນິນສີຄາມ
15 ຂາຂອງລາວເໝືອນດັ່ງເສົາຫີນສີຂາວວາງໄວ້ເທິງຖານທອງຄຳບໍລິສຸດ
ລັກສະນະຂອງລາວ ຄືພູເລບານອນ ດີວິເສດຄືຕົ້ນສົນ
16 ປາກຂອງລາວອ່ອນຫວານທີ່ສຸດ
ທົ່ວທັງຮ່າງກາຍຂອງລາວລ້ວນແຕ່ເປັນຕາໜ້າຮັກຫລາຍ
ໂອ ບັນດາບຸດສາວເມືອງ ເຢຣູຊາເລັມ ເອີຍ ຄູ່ຮັກຂອງຂ້ອຍ ແລະສະຫາຍຂອງຂ້ອຍ
ກໍເປັນຢ່າງນັ້ນແຫລະ

# ບົດທີ 6

## ຄຳເວົ້າຂອງພວກລູກສາວເມືອງເຢຣູຊາເລັມ ແລະເຈົ້າສາວ

1 "ໂອ້ ຜູ້ສາວງາມລ້ຳເລີດໃນທ່າມກາງຜູ້ສາວຄົນອື່ນໆເອີຍ
ຄູ່ຮັກຂອງນາງໄດ້ແວ່ໄປທາງໃດ?
ເພື່ອພວກເຮົາຈະພາກັນໄປຊອກຫາດ້ວຍກັນກັບນາງ"

2 ທີ່ຮັກຂອງຂ້ອຍລົງໄປສວນຂອງລາວໄປໃນສວນເຄື່ອງຫອມ
ເພື່ອຈະໄປລ້ຽງຝູງສັດຂອງຕົນໃນສວນ ແລະເພື່ອຈະເກັບດອກບົວ
3 ຕົວຂ້ອຍເປັນກຳສິດຂອງທີ່ຮັກຂອງຂ້ອຍ
ແລະທີ່ຮັກຂອງຂ້ອຍກໍເປັນຂອງຂ້ອຍ ລາວລ້ຽງຝູງສັດຢູ່ທ່າມກາງໝູ່ດອກບົວ

## ຄວາມງາມ ແລະຄວາມດີຂອງເຈົ້າສາວ

4 “ທີ່ຮັກຂອງອ້າຍເອີຍ ເຈົ້າຊ່າງສວຍງາມ ຄື ເມືອງຕີຣະຊາ
ແລະສວຍງາມຄືເຢຣູຊາເລັມ
ເປັນຕາໜ້າຮັກຄືບັນດາກອງທະຫານທີ່ຢູ່ໃຕ້ທຸງໄຊຢ່າງສະງ່າຜ່າເຜີຍ
5 ຂໍຫຼຽວຕາຂອງນ້ອງອອກໄປຈາກອ້າຍສາ ເພາະວ່າຕານັ້ນເຮັດໃຫ້ອ້າຍວຸ້ນວາຍ
ຜົມຂອງນ້ອງເໝືອນຝູງ ແບ້ທີ່ເຄື່ອນໄປມາຕາມເນີນພູກີເລອາດ
6 ແຂ້ວຂອງນ້ອງຄືຝູງແກະໂຕແມ່ທີ່ຫາກໍຂຶ້ນມາຈາກການຊຳລະລ້າງ
ມີລູກແຝດຕິດມາທຸກໂຕ ແລະບໍ່ມີໂຕໃດທີ່ເປັນໝັນ
7 ຂະໝັບຂອງນ້ອງເໝືອນໝາກພິລາເຄິ່ງໜ່ວຍທີ່ຢູ່ໃນຜ້າຄຸມຫົວ
8 ມີມະເຫສີຫົກສິບຄົນ, ເມຍນ້ອຍແປດສິບຄົນ
ແລະພວກຍິງພົມມະຈາລີອີກຫລາຍເຫລືອຈະນັບ
9 ນົກກາງແກຂອງອ້າຍ ຍິງທີ່ຍອດຢ້ຽມທີ່ສຸດຂອງອ້າຍເອີຍ
ນາງເປັນລູກໂທນຄົນດຽວຂອງແມ່ ເປັນຜູ້ທີ່ເລືອກໄວ້ຈາກແມ່ຜູ້ໃຫ້ກຳເນີດນາງ
ພວກຜູ້ສາວໄດ້ເຫັນນາງ ແລະໄດ້ກ່າວວ່າ ນາງຜູ້ມີຄວາມຜາສຸກ ມະເຫສີທັງຫລາຍ
ແລະພວກເມຍນ້ອຍກໍສັນລະເສີນຍ້ອງຍໍນາງວ່າ
10 “ຜູ້ຍິງຄົນນີ້ ແມ່ນຜູ້ໃດໜໍທີ່ປະກົດຂຶ້ນຄື ຮຸ່ງອາລຸນຕອນເຊົ້າ
ງາມຄືດວງເດືອນ, ບໍລິສຸດຜຸດຜ່ອງຄືດວງອາທິດເປັນຕາໜ້າຮັກ
ຄືກອງທະຫານທີ່ຢືນຢູ່ໃຕ້ທຸງໄຊຢ່າງສະງ່າຜ່າເຜີຍ?”
11 ອ້າຍໄດ້ລົງໄປໃນສວນໝາກຖົ່ວ ເພື່ອຈະໄດ້ເຫັນປ່າຫຍ້າຂຽວສົດຕາມຮ່ອມພູ
ເພື່ອຈະເບິ່ງວ່າ ເຄືອອະງຸ່ນປົ່ງດອກຈູມ ຫລືບໍ່?
ແລະຕົ້ນໝາກພິລາມີດອກບານແລ້ວຫລືບໍ່?
12 ເມື່ອອ້າຍຍັງບໍ່ທັນຮູ້ຕົວ ຈິດໃຈຂອງອ້າຍໄດ້ເອົາຕົວອ້າຍໄປ
ເໝືອນລົດມ້າຂອງອາມິນາດິບ
13 ກັບມາທ້ອນ ກັບມາສາ ຊາວຊູເນມ
ກັບມາເຖີດ ກັບມາ ເພື່ອພວກເຮົາຈະໄດ້ເຫັນເຈົ້າ
ເປັນຫຍັງພວກເຈົ້າຈິ່ງຢາກເບິ່ງນາງນໍ
ຂະນະທີ່ພວກນາງກຳລັງຟ້ອນລຳຢູ່ທ່າມກາງບັນດາຄົນທີ່ຊຸມຢູ່

# ບົດທີ 7

## ບົດເພງທີສາມ

*ຄົນຮັກຂອງນາງ:*

[1] ໂອຍິງທີ່ງາມເລີດ ຕີນນ້ອງທີ່ສຸບໃສ່ເກີບຢູ່ນັ້ນງາມຫລາຍ
ທ້າຍຂອງນ້ອງງາມເໝືອນນັກສິນລະປິນແຕ້ມ.
[2] ສະບືນ້ອງເໝືອນກັບຂັນນໍ້າ
ຊຶ່ງເກັບຮັກສາກິ່ນເຫລົ້າອະງຸ່ນບໍ່ໃຫ້ເຫີຍໄປ
ທ້ອງນ້ອງເໝືອນກອງເຂົ້າ
ທີ່ມີດອກຊ້ອນອ້ອມຮອບໄວ້.
[3] ນົມຂອງນ້ອງງາມເໝືອນລູກກວາງຝາແຝດ.
[4] ລຳຄໍຂອງນ້ອງເໝືອນຫໍຄອຍສູງທີ່ເຮັດດ້ວຍງາຊ້າງ
ຕາຂອງນ້ອງເໝືອນໜອງນໍ້າຢູ່ໃນເມືອງເຮັດຊະໂບນ
ຊຶ່ງໜອງນີ້ຢູ່ໃກ້ປະຕູກຳແພງເມືອງ
ດັງນ້ອງງາມດັ່ງຫໍຄອຍສູງທີ່ເລບານອນ
ຊຶ່ງເປັນບ່ອນເຝົ້າຍາມຢູ່ກົງກັບຂ້າມກັບເມືອງດາມາເຊ.
[5] ຫົວຂອງນ້ອງສູງດັ່ງພູກາເມນ
ຜົມເປຍຂອງນ້ອງສະງ່າງາມດັ່ງສີມ່ວງ
ຄວາມງາມຂອງມັນເຮັດໃຫ້ພະລາຊາກາຍເປັນຈຳເລີຍຮັກ.
[6] ທີ່ຮັກຂອງອ້າຍ ນ້ອງງາມທີ່ສຸດ
ຄວາມຍິນດີຢ່າງພາກພູມໃຈທີ່ນ້ອງມອບໃຫ້ອ້າຍນັ້ນມີລົ້ນເຫລືອ.
[7] ນ້ອງເຕັມໄປດ້ວຍຄວາມງົດງາມເໝືອນດັ່ງຕົ້ນຕານ
ນົມນ້ອງເໝືອນແຂງໝາກຕານ.
[8] ອ້າຍຈະປີນຂຶ້ນຕົ້ນຕານ
ແລະປິດເອົາໝາກຂອງມັນມາ
ນົມນ້ອງປຽບເໝືອນພົ້ວໝາກອະງຸ່ນສຳລັບອ້າຍ
ລົມຫາຍໃຈຂອງນ້ອງເໝືອນກິ່ນຫອມຂອງໝາກໂປມ.
[9] ແລະປາກຂອງນ້ອງເໝືອນດັ່ງເຫລົ້າອະງຸ່ນຊັ້ນດີ.

*ຍິງສາວ:*

ຂໍໃຫ້ເຫລົ້າອະງຸ່ນໄຫລຊື່ໄປຫາຄົນຮັກຂອງຂ້ອຍ
ຂໍໃຫ້ໄຫລໄປຜ່ານສົບ ແລະແຂ້ວຂອງລາວ.
[10] ຂ້ອຍເປັນຂອງຄົນຮັກຂອງຂ້ອຍ ແລະລາວກໍຕ້ອງການຂ້ອຍ.
[11] ທີ່ຮັກ ຈົ່ງມາພີ້ ໃຫ້ພວກເຮົາອອກໄປທົ່ງນານຳກັນ
ແລະໄປນອນຄ້າງຄືນຢູ່ຕາມບ້ານ.

12 ພວກເຮົາຈະລຸກແຕ່ເຊົ້າໄປເບິ່ງຕົ້ນໝາກອະງຸ່ນ
ເພື່ອຢາກຮູ້ວ່າມັນປົ່ງຍອດແລ້ວຫລືຍັງ
ດອກຂອງມັນບານແລ້ວບໍ
ແລະເພື່ອເບິ່ງວ່າຕົ້ນພິລາມີດອກແລ້ວຫລືບໍ
ຢູ່ບ່ອນນັ້ນ ນ້ອງຈະມອບຄວາມຮັກໃຫ້ແກ່ອ້າຍ.
13 ອ້າຍຈະດົມກິ່ນຫອມຂອງໝາກເຂືອ
ແລະພວກເຮົາຈະມີໝາກໄມ້ດີໆ ທຸກຢ່າງຢູ່ຕໍ່ໜ້າເຮືອນ
ທີ່ຮັກ ໝາກໄມ້ຫອມຫວານທີ່ເກັບໄວ້ແຕ່ດົນ ແລະເກັບດຽວນີ້
ນ້ອງໄດ້ຮັກສາໄວ້ໃຫ້ອ້າຍສະເໝີ.

## ບົດທີ 8

1 ນ້ອງປາດຖະໜາຢາກໃຫ້ອ້າຍເປັນອ້າຍຄືງໆ ຂອງນ້ອງ
ຊຶ່ງເປັນຜູ້ທີ່ແມ່ຂອງນ້ອງໄດ້ລ້ຽງມາ
ເພື່ອວ່າຖ້ານ້ອງພົບອ້າຍຢູ່ຕາມຖະໜົນຫົນທາງ
ນ້ອງຈະຈູບອ້າຍໄດ້ໂດຍບໍ່ຢ້ານກົວຄຳນິນທາຂອງໃຜທັງໝົດ.
2 ແລະນ້ອງກໍຈະພາອ້າຍໄປຫາແມ່ຂອງນ້ອງຢູ່ເຮືອນ
ນ້ອງຈະເອົາເຫລົ້າອະງຸ່ນຢ່າງດີ
ແລະນໍ້າໝາກພິລາໃຫ້ອ້າຍດື່ມ.
3 ລາວເອົາມືກໍ້າຊ້າຍຮອງຫົວຂ້ອຍ
ແລະເອົາມືກໍ້າຂວາກອດຂ້ອຍໄວ້.
4 ຍິງນະຄອນເຢຣູຊາເລັມເອີຍ ຈົ່ງສັນຍາຕໍ່ຂ້ອຍເທີ້ນວ່າ
ເຈົ້າຈະບໍ່ປຸກຄວາມຮັກຂອງຂ້ອຍກ່ອນເວລາອັນສົມຄວນ.

### ບົດເພງທີສີ່

*ພວກຜູ້ຍິງ:*

5 ຜູ້ທີ່ຂຶ້ນມາຈາກຖິ່ນແຫ້ງແລ້ງກັນດານ
ທີ່ຢູ່ໃນອ້ອມແຂນຜູ້ບ່າວນັ້ນແມ່ນໃຜ?

*ຍິງສາວ:*

ນ້ອງໄດ້ປຸກອ້າຍລຸກຂຶ້ນຢູ່ກ້ອງຕົ້ນໝາກໂປມ
ຊຶ່ງເປັນບ່ອນທີ່ແມ່ອ້າຍຖືພາ
ແລະເປັນບ່ອນທີ່ອ້າຍເກີດ.
6 ນອກຈາກນ້ອງແລ້ວ ຢ່າຮັກຄົນອື່ນ
ຂໍຢ່າໃຫ້ມີຍິງອື່ນຢູ່ໃນອ້ອມກອດຂອງອ້າຍ
ຄວາມຮັກມີອຳນາດເທົ່າກັບຄວາມຕາຍ

ຄວາມຫລົງໄຫລຮ້າຍແຮງເໝືອນປ່າຊ້າ
ມັນໄດ້ໄໝ້ເໝືອນແປວໄຟ
ແລະໄໝ້ລຸກລາມຢ່າງເຕັມທີ.
7 ນໍ້າຫລວງຫລາຍກໍມອດ ຫລືຖ້ວມມັນບໍ່ໄດ້
ແຕ່ວ່າຖ້າມີຄົນໃດເອົາຄວາມມັ່ງຄັ່ງສົມບູນຂອງຕົນມາຊື້ເອົາຄວາມຮັກ
ລາວກໍຈະໄດ້ຮັບແຕ່ຄວາມໝິ່ນປະໝາດ.

*ພວກຜູ້ຍິງ:*

8 ພວກຂ້ອຍຍັງມີນ້ອງສາວຢູ່ຄົນໜຶ່ງ
ນາງຍັງບໍ່ທັນເປັນສາວ ແລະໜ້າເອິກກໍບໍ່ທັນເຕັມ
ພວກຂ້ອຍຈະເຮັດຢ່າງໃດກັບນາງ
ຖ້າມີຊາຍໜຸ່ມເຂົ້າມາຂໍແຕ່ງງານກັບນາງ.
9 ຖ້ານາງເປັນກຳແພງ
ພວກຂ້ອຍຈະເອົາແທ່ງເງິນສ້າງທໍຄອຍປ້ອງກັນນາງໄວ້
ຖ້ານາງເປັນປະຕູກຳແພງ
ພວກຂ້ອຍຈະເອົາແຜ່ນໄມ້ສົນໃສ່ໄລປ້ອງກັນນາງໄວ້.

*ຍິງສາວ:*

10 ຂ້ອຍເປັນກຳແພງ
ແລະນົມຂ້ອຍເປັນເໝືອນທໍຄອຍສູງ
ໃນສາຍຕາຂອງຄົນຮັກແລ້ວ
ຂ້ອຍເປັນຜູ້ໜຶ່ງທີ່ນຳຄວາມສຸກມາໃຫ້.

*ຄົນຮັກຂອງນາງ:*

11 ກະສັດໂຊໂລໂມນມີສວນອະງຸ່ນທີ່ບາອານ-ຮາໂມນ
ພະອົງຊົງໃຫ້ຄົນມາເຊົ່າສວນນັ້ນ
ແຕ່ຜູ້ເຊົ່າທຸກຄົນຕ້ອງຈ່າຍເງິນພັນຫລຽນໃຫ້.
12 ກະສັດໂຊໂລໂມນເອີຍ ຂ້ອຍມີສວນອະງຸ່ນຂອງຂ້ອຍເອງ
ພະອົງຊົງຮັບເອົາເງິນພັນຫລຽນຂອງພະອົງໄປສາ
ແລະຜູ້ເຊົ່າສວນນັ້ນຈະໄດ້ຮັບຄົນລະສອງຮ້ອຍ.
13 ນ້ອງເອີຍ ໝູ່ເພື່ອນຂອງອ້າຍກຳລັງຟັງຢູ່
ຂໍໃຫ້ອ້າຍໄດ້ຍິນສຽງນ້ອງຈາກສວນນັ້ນແດ່.

*ຍິງສາວ:*

14 ທີ່ຮັກຂອງນ້ອງ ຂໍອ້າຍຈົ່ງເປັນເໝືອນເຍືອງ ແລະກວາງໜຸ່ມ
ແລະມາຫານ້ອງຢູ່ພູຕົ້ນກະຖິນ.

* * *

# ເອຊາຢາ

## ບົດທີ 1

[1]ໜັງສືພຣະຄຳນີ້ ແມ່ນຖ້ອຍຄຳທີ່ເວົ້າເຖິງພວກຢູດາ ແລະເຢຣູຊາເລັມ ຊຶ່ງພຣະເຈົ້າໄດ້ຊົງ
ສະແດງຕໍ່ເອຊາຢາລູກຊາຍຂອງອາໂມດ ໃນລະຫວ່າງທີ່ອຸດຊີຢາ ໂຢທາມ ອາຮາດ ແລະ
ເຮເຊກີຢາເປັນກະສັດຢູດາ.

### ພຣະເຈົ້າຊົງເຕືອນໄພ່ພົນຂອງພຣະອົງ

2 ພຣະຜູ້ເປັນເຈົ້າຊົງກ່າວວ່າ, "ໂລກ ແລະຟ້າສະຫວັນເອີຍ
ຈົ່ງຟັງສິ່ງທີ່ເຮົາຄືພຣະຜູ້ເປັນເຈົ້າຈະກ່າວ!
ພວກເດັກນ້ອຍທີ່ເຮົາລ້ຽງໃຫຍ່ແລ້ວໄດ້ເປັນກະບົດຕໍ່ສູ້ເຮົາ.
3 ງົວຄວາຍມັນຍັງຮູ້ຈັກເຈົ້າຂອງ ລໍກໍຮູ້ຈັກບ່ອນນາຍມັນເອົາໄປລ້ຽງ
ແຕ່ອິສຣາເອນໄພ່ພົນຂອງເຮົາບໍ່ຮູ້ຈັກຫຍັງເລີຍ.
4 ຊົນຊາດບາບ ໃຈຊົ່ວ ແລະໂຫດຮ້າຍເອີຍ ພວກເຈົ້າຈະໄດ້ຮັບເຄາະກຳດອກ!
ບາບໄດ້ລາກຄໍພວກເຈົ້າແລ້ວ ເພາະວ່າ ພວກເຈົ້າໄດ້ປະຖິ້ມ
ແລະຫັນໜີຈາກພຣະເຈົ້າອົງບໍລິສຸດຂອງອິສຣາເອນ.
5 ເປັນຫຍັງພວກເຈົ້າຈຶ່ງກະບົດຢູ່ຕໍ່ໄປ? ຢາກໃຫ້ເຮົາລົງໂທດໜັກຂຶ້ນຊັ້ນບໍ?
ອິສຣາເອນເອີຍ ຫົວຂອງເຈົ້າມີແຕ່ບາດ ຈິດໃຈກໍເຈັບຊໍ້າ.
6 ຕັ້ງແຕ່ຕີນເຖິງຫົວທົ່ວຮ່າງກາຍຂອງເຈົ້າບໍ່ມີບ່ອນໃດປອດ
ມັນມີແຕ່ຟົກຊໍ້າດຳຂຽວ ແລະເປັນແຜ ບາດແຜກໍບໍ່ໄດ້ຫໍ່ພັນ
ບໍ່ໄດ້ຮັກສາໃຫ້ສະອາດ ແລະໃສ່ຢາເລີຍ.
7 ທົ່ວປະເທດຂອງເຈົ້າຮ້າງເປົ່າໝົດ ຫົວເມືອງທັງຫລາຍຖືກເຜົາຜານຍັງແຕ່ດິນ
ຊາວຕ່າງຊາດໄດ້ເຂົ້າຍຶດຄອງ ແລະທຳລາຍທຸກໆສິ່ງຖິ້ມຕໍ່ໜ້າພວກເຈົ້າ.
8 ນະຄອນເຢຣູຊາເລັມກໍປະຖິ້ມໄວ້ ເປັນນະຄອນຖືກເຂົາປິດລ້ອມ
ແລະປາດສະຈາກແນວປ້ອງກັນ ເໝືອນກັບຕູບຄົນເຝົ້າສວນອະງຸ່ນ
ຫລືເໝືອນກັບຖຽງໄຮ່ໝາກແຕງກວາ.
9 ຖ້າພຣະຜູ້ເປັນເຈົ້າແຫ່ງຈັກກະວານບໍ່ໂຜດໃຫ້ບາງຄົນລອດຊີວິດແລ້ວ
ນະຄອນເຢຣູຊາເລັມກໍຈະຖືກທຳລາຍໝົດກ້ຽງ ມັນຈະຄືກັບເມືອງໂຊໂດມ
ແລະເມືອງໂກໂມຣາ.
10 ເຢຣູຊາເລັມເອີຍ ພວກຜູ້ປົກຄອງ ແລະປະຊາຊົນຂອງເຈົ້າ
ຈະເປັນເໝືອນຊາວໂຊໂດມແລະໂກໂມຣາ
ຈົ່ງຕັ້ງໃຈຟັງສິ່ງທີ່ພຣະຜູ້ເປັນເຈົ້າຈະບອກສອນເຈົ້າ.
11 ພຣະອົງຊົງກ່າວວ່າ

"ເຈົ້າຄິດວ່າເຮົາຢາກໄດ້ສິ່ງຂອງທີ່ເຈົ້າເອົາມາເຜົາຖວາຍບູຊາໃຫ້ແກ່ເຮົາຊັ້ນບໍ?
ເຮົາອີ່ມພໍແລ້ວສຳລັບແກະທີ່ເຈົ້າເຜົາບູຊາ ພ້ອມທັງນໍ້າມັນສັດໂຕຕຸ້ຍພີຂອງເຈົ້າ
ເຮົາເບື່ອໜ່າຍເລືອດງົວ ເລືອດແກະແລະເລືອດແບ້ແລ້ວ.
12 ເມື່ອເຈົ້າມາຂາບໄຫວ້ເຮົາ ໃຜບອກໃຫ້ນຳເອົາສິ່ງເຫລົ່ານັ້ນມາໃຫ້ເຮົາ
ໃຜບອກໃຫ້ເຂົ້າມາຢຽບຢໍ່າພຣະວິຫານຂອງເຮົາ?
13 ເຮົາບໍ່ຢາກໄດ້ອີກແລ້ວຂອງຖວາຍອັນຕາຍໆນັ້ນ
ເຮົາກຽດຊັງກິ່ນທູບຄວັນຫອມຂອງເຈົ້າ
ແລະທົນຕໍ່ງານສະຫລອງວັນເດືອນອອກໃໝ່ ວັນຊະບາໂຕ
ແລະງານຊຸມນຸມທາງສາດສະໜາຂອງເຈົ້າບໍ່ໄດ້
ງານທັງໝົດນີ້ຊົ່ວຮ້າຍລົງຍ້ອນບາບຂອງເຈົ້າ.
14 ເຮົາກຽດຊັງງານສະຫລອງວັນເດືອນອອກໃໝ່ ແລະວັນບໍລິສຸດຂອງເຈົ້າ
ມັນເປັນພາລະອັນໜັກໜ່ວງສຳລັບເຮົາ.
15 ເມື່ອເຈົ້າຍົກມືຂຶ້ນອ້ອນວອນຕໍ່ເຮົາ ເຮົາຈະບໍ່ຫລຽວເບິ່ງ
ເຖິງແມ່ນວ່າເຈົ້າຈະອ້ອນວອນຍືດຍາວປານໃດກໍຕາມ ເຮົາກໍຈະບໍ່ຟັງ
ເພາະວ່າມືຂອງເຈົ້າເປິເປື້ອນດ້ວຍເລືອດ.
16 ຈົ່ງຊຳລະລ້າງຕົວເຈົ້າໃຫ້ສະອາດ
ໃຫ້ຢຸດການກະທຳຊົ່ວຮ້າຍທີ່ເຮົາເຫັນຢູ່ນັ້ນເສຍ.
17 ໃຫ້ຝຶກແອບກະທຳຄວາມດີ ແລະສະແຫວງຫາຄວາມຍຸດຕິທຳ
ຊ່ອຍເຫລືອຜູ້ທີ່ຖືກກົດຂີ່ຂົ່ມເຫັງ ຄຸ້ມຄອງຮັກສາລູກກຳພ້າ
ແລະຊ່ອຍເບິ່ງແຍງພວກແມ່ໝ້າຍ."
18 ພຣະຜູ້ເປັນເຈົ້າຊົງກ່າວວ່າ, "ຂໍໃຫ້ພວກເຮົາມາເວົ້າກັນເທາະ
ຄືວ່າ ບາບຂອງເຈົ້າຈະແດງ ແລະເຖິງມັນຈະແດງເຂັ້ມ
ເຮົາກໍຈະເຮັດໃຫ້ຂາວເໝືອນຂົນແກະ.
19 ຖ້າເຈົ້າເຊື່ອຟັງເຮົາ ເຈົ້າຈະໄດ້ກິນຂອງດີໃນແຜ່ນດິນ.
20 ແຕ່ຖ້າປະຕິເສດ ແລະດື້ດຶງ ເຈົ້າຈະໄດ້ຮັບໂທດເຖິງຕາຍ
ເຮົາຄືພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ແຫລະ."

## ເມືອງທີ່ເຕັມໄປດ້ວຍບາບ

21 ນະຄອນທີ່ເຄີຍສັດຊື່ໃນຄັ້ງໜຶ່ງ ແຕ່ບັດນີ້ເປັນເໝືອນແມ່ຈ້າງ
ຄັ້ງໜຶ່ງມີຄົນຊອບທຳອາໄສຢູ່ ແຕ່ບັດນີ້ມີແຕ່ພວກຄາດຕະກອນອາໄສຢູ່.
22 ເຢຣູຊາເລັມເອີຍ ຄັ້ງໜຶ່ງເຈົ້າເປັນເໝືອນເງິນ ແຕ່ບັດນີ້ເຈົ້າບໍ່ມີຄຸນຄ່າເລີຍ
ເຈົ້າເປັນເໝືອນເຫລົ້າອະງຸ່ນຊັ້ນດີ ແຕ່ບັດນີ້ເປັນນໍ້າລ້າໆ.
23 ພວກເຈົ້ານາຍຂອງເຈົ້າກໍເປັນກະບົດ
ເປັນມິດກັບຄົນຂີ້ລັກ ຮັບສິນບົນ ແລະສິນຈ້າງລາງວັນ

ພວກເຂົາບໍ່ເຄີຍຊ່ວຍເຫລືອລູກກຳພ້າອານາຖາ ເພື່ອສູ້ຄະດີໃນສານ
ຫລືບໍ່ຟັງຄຳໃຫ້ການໃດໆຂອງແມ່ໝ້າຍເລີຍ.
24 ດັ່ງນັ້ນ ຈົ່ງຟັງຖ້ອຍຄຳແຫ່ງ ພຣະຜູ້ເປັນເຈົ້າ
ອົງຍິ່ງໃຫຍ່ແຫ່ງຈັກກະວານຂອງ ອິສຣາເອນ ຊຶ່ງຊົງກ່າວວ່າ,
"ເຮົາຈະແກ້ແຄ້ນເຈົ້າຜູ້ເປັນສັດຕູຂອງເຮົາ ເພື່ອເຈົ້າຈະບໍ່ໄດ້ເຮັດໃຫ້ເຮົາຫຍຸ້ງຍາກອີກ.
25 ເຮົາຈະຕໍ່ສູ້ຂັດຂວາງເຈົ້າ
ຈະເຮັດໃຫ້ເຈົ້າສະອາດເໝືອນເຮັດໃຫ້ເຫລັກຂີ້ໝ້ຽງກ້ຽງສະອາດຄືເກົ່າ
ຈະເອົາຂອງເປິເປື້ອນທັງໝົດໃນຕົວເຈົ້າອອກໜີໄປ.
26 ເຮົາຈະໃຫ້ເຈົ້າມີຜູ້ນຳ ແລະມີທີ່ປຶກສາເໝືອນທີ່ເຄີຍມີມາແຕ່ກ່ອນແລ້ວ
ເມື່ອນັ້ນ ເຢຣູຊາເລັມ ຈະຖືກເອີ້ນວ່າ ນະຄອນທີ່ຊອບທຳ ແລະສັດຊື່."
27 ຍ້ອນ ພຣະຜູ້ເປັນເຈົ້າ ຊົງຊອບທຳ ພຣະອົງຈຶ່ງຈະຊ່ອຍນະຄອນ ເຢຣູຊາເລັມ
ແລະທຸກໆຄົນໃຫ້ກັບໃຈໃໝ່ ໃນທີ່ນັ້ນໃຫ້ໄດ້ຮັບຄວາມປອດໄພ.
28 ແຕ່ຈະຊົງທຳລາຍທຸກຄົນທີ່ເຮັດບາບ ແລະກະບົດຕໍ່ສູ້ພຣະອົງ
ພ້ອມທັງຈະຊົງຂ້າທຸກຄົນທີ່ປະຖິ້ມພຣະອົງ.
29 ເຈົ້າຈະເສຍໃຈທີ່ໄດ້ຂາບໄຫວ້ຕົ້ນໄມ້
ແລະໄດ້ປຸກສ້າງບ່ອນຂາບໄຫວ້ໄວ້ໃນສວນ.
30 ເຈົ້າຈະຫ່ຽວແຫ້ງເໝືອນກັບຕົ້ນສົນຕາຍ
ແລະເໝືອນກັບໜ້າດິນທີ່ຂາດນໍ້າ.
31 ສະເກັດໄຟຍ່ອມໄໝ້ໄມ້ແຫ້ງໄດ້ສັນໃດ
ຄົນແຂງແຮງກໍຈະຖືກຄວາມຊົ່ວຂອງຕົນເອງທຳລາຍໄດ້ສັນນັ້ນ
ແລະຈະບໍ່ມີໃຜສາມາດຢຸດຢັ້ງການທຳລາຍນັ້ນໄດ້.

# ບົດທີ 2

## ສັນຕິສຸກຕະຫລອດໄປເປັນນິດ

1ຕໍ່ໄປນີ້ ແມ່ນເລື່ອງທີ່ກ່ຽວກັບຢູດາ ແລະ ເຢຣູຊາເລັມ ຊຶ່ງພຣະເຈົ້າຊົງບອກ ເອຊາຢາ ລູກ
ຊາຍ ອາໂມດ ວ່າ,
2 ເມື່ອມື້ນັ້ນມາເຖິງ ພູບ່ອນຕັ້ງພຣະວິຫານ
ຈະສູງກວ່າພູທຸກໆໜ່ວຍ ຫລາຍໆຊາດຈະຫລັ່ງໄຫລກັນມາຍັງພູນັ້ນ.
3 ແລະຊົນຊາດເຫລົ່ານັ້ນຈະເວົ້າວ່າ,
"ໃຫ້ພວກເຮົາຂຶ້ນໄປເທິງພູຂອງ ພຣະຜູ້ເປັນເຈົ້າ ເທາະ
ໄປຍັງວິຫານແຫ່ງ ພຣະເຈົ້າ ຂອງ ອິສຣາເອນ
ເພື່ອພວກເຮົາຈະຮູ້ວ່າພຣະອົງຊົງປະສົງໃຫ້ເຮົາເຮັດຫຍັງ
ແລ້ວເຮົາກໍຈະໄດ້ເຮັດຕາມພຣະປະສົງນັ້ນ"

ພຣະໄທຄຳສອນຂອງ ພຣະຜູ້ເປັນເຈົ້າ ມາຈາກ ເຢຣູຊາເລັມ
ພຣະອົງຊົງເວົ້າກັບໄພ່ພົນຂອງພຣະອົງລົງມາຈາກພູຊີໂອນ.
4 ພຣະອົງຈະຊົງຕັດສິນພິພາກສາຊົນຊາດໃຫຍ່ທັງຫລາຍ
ພວກເຂົາຈະເອົາດາບຕີເປັນໝາກສົບໄຖ
ແລະຕີຫອກເປັນກ່ຽວ
ຊາດທັງຫລາຍຈະບໍ່ມີສົງຄາມອີກ
ຈະບໍ່ຈັດຕຽມເພື່ອເຮັດສົງຄາມອີກ.
5 ເຊື້ອສາຍຢາໂຄບ ເອີຍ ບັດນີ້ ໃຫ້ພວກເຮົາດຳເນີນໄປໃນຄວາມສະຫວ່າງ
ທີ່ ພຣະຜູ້ເປັນເຈົ້າ ໄດ້ຊົງປະທານໃຫ້ນັ້ນສາ!
6 ເພາະພຣະອົງຊົງປະຖິ້ມຊົນຊາດຂອງພຣະອົງເສຍ ຄືເຊື້ອສາຍຂອງຢາໂຄບ
ເພາະວ່າພວກເຂົາເຕັມໄປດ້ວຍຜູ້ທຳນວາຍຈາກຕາເວັນອອກ ແລະ ພວກໝໍມໍ
ຄົນ ຟີລິດສະຕິນ ແລະສະໜິດສະໜົມກັບຄົນຕ່າງຊາດ
7 ແຜ່ນດິນຂອງພວກເຂົາເຕັມໄປດ້ວຍເງິນ ແລະຄຳ,
ຊັບສົມບັດຂອງພວກເຂົາບໍ່ມີມື້ສິ້ນສຸດ ແຜ່ນດິນຂອງພວກເຂົາເຕັມດ້ວຍມ້າ
ແລະລົດຮົບຂອງພວກເຂົາກໍບໍ່ມີສິ້ນສຸດ
8 ແຜ່ນດິນຂອງພວກເຂົາເຕັມໄປດ້ວຍຮູບເຄົາລົບ
ພວກເຂົາຂາບໄຫວ້ຜົນງານແຫ່ງມືຂອງຕົນເອງ
ຕໍ່ສິ່ງທີ່ນິ້ວມືຂອງພວກເຂົາໄດ້ກະທຳ
9 ມະນຸດ ຈຶ່ງຕົກຕ່ຳລົງ ແລະຄົນໃຫຍ່ຄົນໂຕກໍດ້ອຍລົງ
ຢ່າອະໄພພວກເຂົາເລີຍ
10 ຈົ່ງຫລົບເຂົ້າໄປໃນຫີນ ແລະລີ້ຊ່ອນຢູ່ໃນຂີ້ຝຸ່ນດິນ
ໃຫ້ພົ້ນຈາກຄວາມໜ້າຢ້ານກົວຂອງ ພຣະເຈົ້າ ແລະ
ຈາກພຣະລັດສະໝີ ແລະອຳນາດຂອງພຣະອົງ
11 ຄວາມຍິ່ງຈອງຫອງຂອງມະນຸດຈະຕົກຕ່ຳລົງ
ແລະຄວາມຈອງຫອງຂອງມະນຸດຈະຖືກປາບລົງ
ແລະ ພຣະເຈົ້າ ອົງດຽວຈະເປັນທີ່ຍ້ອງຍໍສັນລະເສີນໃນມື້ນັ້ນ
12 ເພາະວ່າພຣະເຈົ້າ ອົງຍິ່ງໃຫຍ່ສູງສຸດຈະຕໍ່ສູ້ກັບຜູ້ຍິ່ງຈອງຫອງ
ແລະອວດອົ່ງໃຫ້ຖ່ອມລົງ
13 ຈະຊົງຕໍ່ສູ້ຕົ້ນສົນສີດາທັງຫລາຍຂອງ ເລບານອນ ທີ່ສູງສົ່ງ
ແລະຕົ້ນໝາກກອກເທດແຫ່ງ ບາຊານ
14 ຊົງສູ້ກັບພູເຂົາທີ່ສູງຊັນທັງປວງ
ແລະເນີນຜາທັງຫລາຍ
15 ຊົງສູ້ກັບຫໍຄອຍສູງທຸກແຫ່ງ

ແລະສູ້ກັບກຳແພງທີ່ເຂັ້ມແຂງທຸກແຫ່ງ
16 ຊຶ່ງສູ້ກັບກຳປັ່ນທັງປວງແຫ່ງຕາຊິດ
ແລະສູ້ກັບເຮືອທີ່ງົດງາມທັງປວງ
17 ແລະຄວາມພອງຕົວຂອງມະນຸດຈະຕ້ອງຖືກປາບລົງ
ແລະຄວາມຈອງຫອງຂອງຄົນຈະຕົກຕ່ຳລົງ
ແລະໃນມື້ນັ້ນພຣະເຈົ້າອົງດຽວຈະເປັນທີ່ເທີດທູນ
18 ແລະຮູບເຄົາລົບທັງປວງຈະສູນສິ້ນໄປ
19 ຄົນຈະເຂົ້າໄປໃນຖ້ຳ ແລະໃນຂຸມດິນ
ໃຫ້ພົ້ນຈາກພຣະພິໂລດຂອງພຣະເຈົ້າ
ຈາກພຣະລັດສະໝີ ແລະອຳນາດຂອງພຣະເຈົ້າ
ເມື່ອພຣະອົງຊົງລຸກຂຶ້ນກະທຳໃຫ້ໂລກສັ່ນສະທ້ານ
20 ໃນມື້ນັ້ນ ຄົນຈະແກວ່ງຮູບເຄົາລົບຂອງຕົນທີ່ເຮັດດ້ວຍເງິນ
ຫລືຄຳ ແລະຈາກມືຂອງພວກເຂົາເອງຖິ້ມໄປຍັງໂຕຕຸ່ນ
ແລະໂຕເຈຍທັງຫລາຍ
21 ເພື່ອພວກເຂົາຈະເຂົ້າໄປໃນຖ້ຳຫີນ ແລະຕາມຮ່ອມຂອງຜາຫີນ
ໃຫ້ພົ້ນຈາກພຣະພິໂລດອັນໜ້າຢ້ານກົວຂອງພຣະເຈົ້າ
ເມື່ອພຣະອົງຊົງລຸກຂຶ້ນ ເຮັດໃຫ້ໂລກສັ່ນສະທ້ານ
22 ຈົ່ງຕັດຂາດຈາກມະນຸດເສຍ ຊຶ່ງໃນດັງຂອງລາວມີລົມຫາຍໃຈ
ເພາະລາວບໍ່ມີຄຸນຄ່າອັນໃດອີກແລ້ວ

# ບົດທີ 3

## ພຣະເຈົ້າຊົງພິພາກສາຢູດາ

1 ເພາະວ່າເບິ່ງແມ ອົງພຣະຜູ້ເປັນເຈົ້າ
ຄືພຣະຜູ້ເປັນເຈົ້າແຫ່ງຈັກກະວານໄດ້ຊົງນຳອອກໄປຈາກເຢຣູຊາເລັມ
ແລະຈາກຢູດາຄືອາຫານ ແລະນ້ຳທັງໝົດ
2 ພວກຄົນທີ່ເຂັ້ມແຂງ ແລະພວກຜູ້ຕັດສິນ
ແລະຜູ້ປະກາດພຣະທຳ ພວກໝໍມໍສະຫລາດ ແລະ ພວກເຖົ້າແກ່
3 ນາຍຫ້າສິບຄົນ ແລະຜູ້ທີ່ມີກຽດ ທີ່ປຶກສາ
ແລະນາຍຊ່າງຜູ້ຊຳນານ ແລະນັກເວົ້າທີ່ມີວາທະໂວຫານດີ
4 ແລະເຮົາຈະເຮັດໃຫ້ຄົນໜຸ່ມເປັນເຈົ້ານາຍຂອງພວກເຂົາ
ແລະພວກເດັກນ້ອຍຈະປົກຄອງພວກເຂົາ
5 ປະຊາຊົນຈະຖືກບີບບັງຄັບ ພວກເຂົາຈະຂົ່ມເຫັງກັນແລະກັນ
ແລະທຸກຄົນຈະບີບບັງຄັບເພື່ອນບ້ານ ຂອງຕົນ

ເດັກນ້ອຍຈະບໍ່ນັບຖືຜູ້ໃຫຍ່ ແລະຄົນຊົ່ວເຮັດການຫຍາບຄາຍຕໍ່ຜູ້ທີ່ມີກຽດ
6 ເມື່ອມີຄົນໜຶ່ງໄປຈັບພີ່ນ້ອງຂອງຕົນໃນເຮືອນພໍ່ຂອງລາວ ແລະກ່າວວ່າ
"ເຈົ້າມີເສື້ອຊັ້ນນອກແລ້ວ ເຈົ້າຈຶ່ງເປັນຜູ້ນຳຂອງພວກເຮົາ
ແລະຈົ່ງຄຸ້ມຄອງສິ່ງທີ່ມີຢູ່ນີ້ເທີ້ນ"
7 ໃນມື້ນັ້ນລາວຈະຕອບວ່າ "ຂ້າພະເຈົ້າຈະບໍ່ຍອມເປັນໝໍຢາ
ເພາະວ່າໃນເຮືອນຂອງຂ້າພະເຈົ້າບໍ່ມີທັງ ອາຫານ ແລະເສື້ອຊັ້ນນອກ
ພວກທ່ານຈະຕັ້ງຂ້າພະເຈົ້າໃຫ້ເປັນຜູ້ນຳ ປະຊາຊົນບໍ່ໄດ້"
8 ເພາະວ່າເຢຣູຊາເລັມກໍຫລົ້ມຈົມ ແລະຢູດາກໍລົ້ມລົງຍ້ອນລີ້ນຂອງພວກເຂົາ
ແລະການກະທຳຂອງພວກເຂົາໄດ້ ຕໍ່ສູ້ພຣະຜູ້ເປັນເຈົ້າ
ໄດ້ກະບົດຕໍ່ພຣະເນດອັນຮຸ່ງເຮືອງຂອງພຣະອົງ
9 ສີໜ້າຂອງພວກເຂົາເປັນພະຍານຕໍ່ສູ້ພວກເຂົາເອງ
ພວກເຂົາປະກາດຮ້ອງຄວາມຜິດບາບຂອງພວກເຂົາ ເໝືອນກັບເມືອງໂຊໂດມ
ພວກເຂົາບໍ່ໄດ້ປິດບັງບາບນັ້ນໄວ້ ວິບັດເກີດແກ່ຈິດໃຈຂອງພວກເຂົາ ເພາະວ່າພວກ
ເຂົາໄດ້ນຳຄວາມຊົ່ວຮ້າຍມາເປັນບຳເໜັດແກ່ຕົວພວກເຂົາເອງ
10 ຈົ່ງບອກຄົນຊອບທຳວ່າ ພວກເພິ່ນຈະຈະເລີນໃນຄວາມດີ
ເພາະວ່າເພິ່ນຈະໄດ້ກິນຜົນແຫ່ງການກະທຳ ຂອງຕົນ
11 ວິບັດແກ່ຄົນຊົ່ວ ເຫດຮ້າຍຈະຕົກຖືກພວກເຂົາ
ເພາະວ່າສິ່ງໃດທີ່ມືພວກເຂົາໄດ້ເຮັດ ກໍຈະກັບຄືນມາຫາພວກເຂົາເຊັ່ນນັ້ນ
12 ສ່ວນຊົນຊາດຂອງເຮົາ ເດັກນ້ອຍເປັນຜູ້ບີບບັງຄັບພວກເຂົາ
ແລະຜູ້ຍິງປົກຄອງເໜືອພວກເຂົາ ໂອ ຊົນຊາດ ຂອງເຮົາເອີຍ
ຜູ້ນຳຂອງເຈົ້າທີ່ນຳພາພວກເຈົ້າໄປ ກໍລໍ້ລວງພວກເຈົ້າ
ແລະເຮັດໃຫ້ທິດທາງທັງຫລາຍຂອງເຈົ້າສັບສົນ
13 ພຣະຜູ້ເປັນເຈົ້າໄດ້ເຂົ້າປະທັບເພື່ອສູ້ຄວາມ
ພຣະອົງຢືນຢູ່ເພື່ອພິພາກສາຊົນຊາດຂອງພຣະອົງ
14 ພຣະຜູ້ເປັນເຈົ້າຈະໄດ້ເຂົ້າພິພາກສາພວກຜູ້ໃຫຍ່
ແລະເຈົ້ານາຍແຫ່ງຊົນຊາດຂອງພຣະອົງ "ຝ່າຍເຈົ້າທັງຫລາຍນີ້ແຫລະ
ທີ່ໄດ້ກັດກິນສວນອະງຸ່ນ ແລະສິ່ງຂອງທີ່ຍຶດມາຈາກຄົນຈົນ ກໍຢູ່ໃນເຮືອນຂອງເຈົ້າ
15 ມັນໝາຍຄວາມວ່າຢ່າງໃດ ທີ່ເຈົ້າໄດ້ທຸບຊົນຊາດຂອງເຮົາເປັນຕ່ອນໆ
ແລະທັບໜ້າຄົນຈົນໃຫ້ແຕກມຸ່ນໄປ" ອົງພຣະຜູ້ເປັນເຈົ້າ
ພຣະເຈົ້າແຫ່ງຈັກກະວານກ່າວດັ່ງນີ້ແຫລະ

## ພຣະເຈົ້າຊົງພິພາກສາລູກສາວທັງຫລາຍຂອງຊີໂອນ

16 ພຣະຜູ້ເປັນເຈົ້າກ່າວອີກວ່າ
"ເພາະວ່າລູກສາວທັງຫລາຍຂອງຊີໂອນກໍຈອງຫອງ ແລະຍ່າງຄໍຍືດຄໍຍາວຕາ

ຂອງພວກນາງເຕັມໄປດ້ວຍຄວາມຢາກໄດ້
ເວລາຍ່າງກໍເຮັດໃຫ້ບາດຕີນມີສຽງເປັນຈັງຫວະ
17 ອົງພຣະຜູ້ເປັນເຈົ້າຈະໂຈມຕີໂດຍເຮັດໃຫ້ຫົວຂອງບັນດາລູກສາວຂອງຊີໂອນ
ເປັນຂີ້ທິດ
ແລະພຣະຜູ້ເປັນເຈົ້າຈະເຮັດໃຫ້ສ່ວນລັບຂອງພວກນາງທັງຫລາຍໂລ້ນໄປ

18ໃນມື້ນັ້ນອົງພຣະຜູ້ເປັນເຈົ້າຈະຖອນເຄື່ອງປະທັບອັນງົດງາມໄປ ຄື ແຫວນ, ຕຸ້ມວົງເດືອນ
19ຈີ້ ປະລັກແຂນ ຜ້າພັນຄໍ 20ໝວກ ປອກຂໍ້ຕີນ, ຜ້າຄຽນຫົວ ທີບເຄື່ອງນໍ້າຫອມ ຕຸ້ມຫູ
21ແຫວນ ແລະປອກດັງ 22ເສື້ອຜ້າປ່ານ ແລະເສື້ອຊັ້ນນອກ ຜ້າປົກ ແລະກະເປົາຖື 23ແວ່ນ
ແຍງ ເສື້ອຜ້າລິນິນ ຜ້າປົກຫົວ ແລະຜ້າໂອບຕົວ

24 ຕໍ່ມາ ແທນນໍ້າຫອມຈະມີແຕ່ຄວາມເປື່ອຍເນົ່າ ແທນຜ້າມັດແອວຈະມີເຊືອກ
ແທນຜົມດັດຈະມີແຕ່ຫົວລ້ານ ແທນເສື້ອງາມລໍ້າຄ່າຈະມັດແອວດ້ວຍຜ້າກະສອບ
ແທນຄວາມງົດງາມຈະມີແຕ່ຮອຍໄໝ້
25 ພວກຜູ້ຊາຍຂອງເຈົ້າຈະລົ້ມລົງດ້ວຍດາບ
ແລະທະຫານທີ່ເກັ່ງກ້າຂອງເຈົ້າຈະລົ້ມລົງໃນສົງຄາມ
26 ປະຕູຂອງນາງຈະຮ້ອງທຸກ ແລະໄວ້ທຸກ
ນາງຈະໂດດດ່ຽວແລ້ວນັ່ງຢູ່ດິນ”

# ບົດທີ 4

1ໃນມື້ນັ້ນຍິງເຈັດຄົນຈະຈັບຊາຍຄົນໜຶ່ງໄວ້, ກ່າວວ່າ “ພວກເຮົາຈະຫາກິນເອງ ແລະ ຫາ
ນຸ່ງຫົ່ມເສື້ອຜ້າເອງ ຂໍພຽງແຕ່ໃຫ້ພວກເຂົາເອີ້ນພວກເຮົາດ້ວຍຊື່ຂອງເຈົ້າ ຂໍຈົ່ງປົດຄວາມອັບ-
ອາຍຂາຍໜ້າຂອງເຮົາໃຫ້ອອກໄປສາ”.
2ໃນມື້ນັ້ນ ບັນດາສິ່ງທີ່ປົ່ງຂຶ້ນຍ້ອນພຣະຜູ້ເປັນເຈົ້າຈະງົດງາມ ແລະຮຸ່ງເຮືອງ ແລະພືດຜົນ
ຂອງແຜ່ນດິນນັ້ນຈະເປັນ ຄວາມພູມໃຈ ແລະເປັນກຽດແກ່ຄົນອິສຣາເອນທີ່ລອດມາໄດ້. 3ຕໍ່ມາ
ຄົນທີ່ເຫລືອຢູ່ໃນຊີໂອນ ແລະຍັງຄ້າງຢູ່ໃນເຢຣູຊາເລັມ ເຂົາຈະເອີ້ນວ່າບໍລິສຸດ ຄືທຸກຄົນທີ່ມີຊື່
ຂຽນໄວ້ໃນທະບຽນແຫ່ງຊີວິດໃນ ເຢຣູຊາເລັມ 4ອົງພຣະຜູ້ເປັນເຈົ້າຈະຊົງລ້າງຄວາມເປິເປື້ອນ
ຂອງລູກສາວທັງຫລາຍຂອງຊີໂອນ ແລະຊໍາລະຮອຍເລືອດຂອງເຢຣູຊາເລັມອອກຈາກທ່າມ-
ກາງເມືອງນັ້ນ ດ້ວຍອານຸພາບແຫ່ງການພິພາກສາ ແລະດ້ວຍອານຸພາບຂອງການເຜົາໄໝ້.
5ພຣະຜູ້ເປັນເຈົ້າຈະສ້າງເມກ ແລະຄວັນໄຟເພື່ອກາງເວັນ ແລະແສງແຫ່ງແປວໄຟເພື່ອກາງຄືນ
ຢູ່ເໜືອບ່ອນຢູ່ອາໄສທັງໝົດຂອງພູເຂົາຊີໂອນ ແລະປົກຄຸມປະຊາຊົນໃນເມືອງນັ້ນ ເພາະວ່າຈະ
ມີຫລັງຄາ ແລະການປ້ອງກັນຢູ່ເໜືອສະຫງ່າລາສີທົ່ວໄປ. 6ຈະມີເຕັນເຮັດຮົ່ມກາງເວັນບັງແດດ
ເປັນບ່ອນລີ້ໄພແລະບ່ອນກໍາບັງລົມພາຍຸຝົນ.

# ບົດທີ 5

## ເພງກ່ຽວສວນອະງຸ່ນ

1 ຈົ່ງຟັງເດີ ຂ້າພະເຈົ້າຈະຮ້ອງເພງນີ້ສູ່ຟັງ
ເພງທີ່ກ່ຽວກັບເພື່ອນຂອງຂ້າພະເຈົ້າ ແລະສວນອະງຸ່ນຂອງລາວ
ຄືເພື່ອນຂອງຂ້າພະເຈົ້າມີສວນອະງຸ່ນຕອນໜຶ່ງ
ຢູ່ເທິງພູທີ່ອຸດົມສົມບູນ.
2 ລາວຂຸດດິນ ແລະເອົາດິນອອກ
ປູກເບ້ຍອະງຸ່ນພັນດີທີ່ສຸດໃສ່
ລາວປຸກຫໍຄອຍໄວ້ສຳລັບເຝົ້າສວນ
ພ້ອມທັງສະກັດຫີນສຳລັບບີບໝາກອະງຸ່ນ
ລາວຄິດວ່າຈະໄດ້ໝາກອະງຸ່ນດີ
ແຕ່ໄດ້ຮັບໝາກອະງຸ່ນສົ້ມໝົດ.
3 ເພື່ອນຂອງຂ້າພະເຈົ້າເວົ້າວ່າ, “ຊາວ ເຢຣູຊາເລັມ ແລະຄົນ ຢູດາ ເອີຍ
ຈົ່ງພິຈາລະນາເບິ່ງວ່າ ລະຫວ່າງຂ້າພະເຈົ້າກັບສວນອະງຸ່ນ.
4 ວ່າຍັງມີອັນໃດອີກແດ່ທີ່ຂ້າພະເຈົ້າບໍ່ໄດ້ເຮັດໃນສວນນີ້?
ເປັນຫຍັງໝາກຂອງມັນຈຶ່ງສົ້ມ
ທັງໆທີ່ຂ້າພະເຈົ້າຄາດຫວັງວ່າຈະໄດ້ໝາກຫວານດີ.
5 ບັດນີ້ ສົມຄວນແລ້ວທີ່ຂ້າພະເຈົ້າຈະເຮັດກັບສວນອະງຸ່ນຂອງຂ້າພະເຈົ້າດັ່ງນີ້
ຄືຈະຮື້ໜາມ ແລະຮົ້ວທີ່ອ້ອມມັນນັ້ນອອກ ເພື່ອໃຫ້ສັດປ່າມາກິນ
ແລະຢຽບຢ່ຳຖິ້ມເສຍ.
6 ຈະປ່ອຍໃຫ້ຫຍ້າເກີດຂຶ້ນຈົນເຕັມ ຈະບໍ່ລິແໜງ ຫລືພວນດິນ
ແຕ່ຈະປ່ອຍໃຫ້ເຄືອ ແລະຕົ້ນໜາມປົ່ງຂຶ້ນ
ຂ້າພະເຈົ້າຈະບໍ່ໃຫ້ຝົນຕົກລົງມາຮຳສວນນັ້ນ.”
7 ອິສຣາເອນ ແມ່ນສວນອະງຸ່ນຂອງ ພຣະຜູ້ເປັນເຈົ້າ ອົງຍິ່ງໃຫຍ່
ຄົນ ຢູດາ ແມ່ນເບ້ຍອະງຸ່ນທີ່ພຣະອົງຊົງປູກໄວ້
ພຣະອົງຊົງຄາດຫວັງໃຫ້ພວກເຂົາເຮັດດີ
ແຕ່ພວກເຂົາຊ້ຳພັດຂ້າຄົນ!
ພຣະອົງຊົງຄາດຫວັງໃຫ້ພວກເຂົາເຮັດຄວາມຊອບທຳ
ແຕ່ຊົງໄດ້ຍິນຄົນຮ້ອງຂໍຄວາມຍຸດຕິທຳ!

## ວິບັດຫົກຢ່າງແກ່ຄົນອິສຣາເອນ

8 ວິບັດແກ່ຄົນເຫລົ່ານັ້ນທີ່ປຸກເຮືອນຫລັງໜຶ່ງເຂົ້າກັບອີກຫລັງໜຶ່ງ
ແລະເອົານາເຂົ້າກັບນາຈົນບໍ່ມີບ່ອນອີກແລ້ວ
ເພື່ອພວກເຂົາຈະຕ້ອງຢູ່ໂດດດ່ຽວໃນທ່າມກາງແຜ່ນດິນນັ້ນ

9 ໃນຫູຂອງຂ້າພະເຈົ້າໄດ້ຍິນ ພຣະເຈົ້າ ແຫ່ງຈັກກະວານກ່າວວ່າ
“ຈິງແທ້ ບ້ານຫລາຍຫລັງຈະຕ້ອງຮ້າງເປົ່າ ບ້ານໃຫຍ່ບ້ານງາມຈະບໍ່ມີຄົນອາໄສຢູ່
10 ເພາະວ່າສວນອະງຸ່ນຊາວທ້າໄຮ່ຈະໄດ້ຜົນພຽງແຕ່ບຶດດຽວ
ແລະເມັດພືດໜຶ່ງໂຮເມີຈະໃຫ້ຜົນພຽງແຕ່ເອຟາດຽວ”
11 ວິບັດແກ່ຄົນເຫລົ່ານັ້ນທີ່ລຸກຂຶ້ນແຕ່ເຊົ້າມືດ ເພື່ອແລ່ນໄປຫາກິນເຫລົ້າ
ແລະຄ່ອຍໆກິນຈົນຄໍ່າມືດ ຈົນເຫລົ້າ ອະງຸ່ນເຮັດໃຫ້ພວກເຂົາເມົາ
12 ພວກເຂົາມີພິນຄູ່ ແລະພິນໃຫຍ່ ກອງ ປີ່ ແລະເຫລົ້າອະງຸ່ນໃນງານລ້ຽງຂອງພວກເຂົາ
ແຕ່ພວກເຂົາ ທັງຫລາຍບໍ່ໄດ້ເອົາໃຈໃສ່ຕໍ່ພຣະລາຊະກິດຂອງ ພຣະຜູ້ເປັນເຈົ້າ
ຫລືພິຈາລະນາການງານຂອງພຣະອົງ
13 ເພາະເຫດນັ້ນ ຊົນຊາດຂອງເຮົາຈຶ່ງຕົກໄປເປັນຊະເລີຍ
ເພາະວ່າຂາດຄວາມຮູ້ ຜູ້ມີກຽດຂອງພວກເຂົາກໍຕາຍອຶດ
ແລະປະຊາຊົນຂອງພວກເຂົາກໍຫ່ຽວແຫ້ງໄປຍ້ອນຄວາມກະຫາຍນໍ້າ
14 ເຫດສະນັ້ນ ນາລົກກໍຂະຫຍາຍບ່ອນຂອງມັນອອກ ແລະອ້າປາກອອກໂດຍບໍ່ຈຳກັດ
ແລະພວກເຈົ້ານາຍຂອງ ເຢຣູຊາເລັມ ຈະລົງໄປໃນບ່ອນນັ້ນ
ແລະປະຊາຊົນຂອງເມືອງນັ້ນ ສຽງອຶກກະ
ທຶກຂອງພວກເຂົາ ແລະຄວາມຍິນດີຂອງພວກເຂົາດ້ວຍ
15 ຄົນຕໍ່າຕ້ອຍຈຶ່ງຈະກົ້ມຂາບລົງ ແລະຄົນທີ່ເຂັ້ມແຂງກໍອ່ອນນ້ອມລົງ
ແລະຕາຂອງຜູ້ຈອງຫອງກໍຈະຖືກຕໍ່າລົງ
16 ແຕ່ ພຣະຜູ້ເປັນເຈົ້າ ແຫ່ງຈັກກະວານຈະໄດ້ຮັບການເທີດທູນໄວ້ດ້ວຍຄວາມຍຸດຕິທຳ
ແລະ ພຣະເຈົ້າ ອົງບໍລິສຸດ ຈະໄດ້ສະແດງຄວາມບໍລິສຸດທີ່ສັກສິດດ້ວຍຄວາມຊອບທຳ
17 ແລ້ວຝູງລູກແກະຈະທຽວຫາກິນຫຍ້າຕາມລັກສະນະທ່າທາງຂອງມັນ
ແລະລູກແບ້ໂຕອ້ວນພີຈະຫາກິນໃນ ບ່ອນທີ່ເພພັງແລ້ວທັງຫລາຍ
18 ວິບັດແກ່ຄົນເຫລົ່ານັ້ນທີ່ລາກດຶງຄວາມຊົ່ວຊ້າອະທຳ
ດ້ວຍສາຍເຊືອກຂອງຄວາມອວດອົ່ງທະນົງຕົວ
ຜູ້ລາກບາບເໝືອນກັບໃຊ້ເຊືອກກວຽນ
19 ຜູ້ກ່າວວ່າ “ຂໍໃຫ້ພຣະອົງຮີບມາກະທຳການຂອງພຣະອົງ
ເພື່ອເຮົາຈະໄດ້ເຫັນການນັ້ນ ໃຫ້ຄຳສັ່ງສອນ
ພຣະປະສົງຂອງອົງຜູ້ບໍລິສຸດແຫ່ງ ອິສຣາເອນ ສະເດັດເຂົ້າມາໃກ້ ເພື່ອເຮົາຈະໄດ້ຮູ້”
20 ວິບັດແກ່ຄົນເຫລົ່ານັ້ນທີ່ເອີ້ນຄວາມຊົ່ວຮ້າຍວ່າຄວາມດີ
ແລະຄວາມດີວ່າຄວາມຊົ່ວຮ້າຍ ຜູ້ຖືເອົາຄວາມມືດ ເປັນຄວາມສະຫວ່າງ
ແລະຄວາມສະຫວ່າງເປັນຄວາມມືດ ຜູ້ຖືເອົາຄວາມຂົມເປັນຄວາມຫວານ
ແລະຄວາມຫວານ ເປັນຄວາມຂົມ
21 ວິບັດແກ່ຄົນເຫລົ່ານັ້ນທີ່ເບິ່ງຕົວເອງວ່າເປັນຄົນສະຫລາດ

ແລະຖືຕົວເອງເປັນຄົນທີ່ມີຄວາມເຂົ້າໃຈໃນສາຍຕາຂອງຕົນ
22 ວິບັດແກ່ຄົນເຫລົ່ານັ້ນທີ່ເກັ່ງໃນການດື່ມເຫລົ້າອະງຸ່ນ
ແລະເປັນຄົນກ້າໃນການປະສົມເຫລົ້າ
23 ຜູ້ທີ່ຕັດສິນໃຫ້ຄົນຮ້າຍວ່າບໍ່ມີຄວາມຜິດ ເພາະຕົນໄດ້ຮັບສິນບົນ
ແລະຖອດເອົາຄວາມຊອບທຳໄປຈາກຜູ້ ຊອບທຳ
24 ເຫດສະນັ້ນ ແປວໄຟໄໝ້ເຟືອງເຂົ້າສັນໃດ ແລະໄຟເຜົາຜານຫຍ້າແຫ້ງສັນໃດ
ຮາກຂອງພວກເຂົາກໍຈະເປັນຄືກັບ ຄວາມເປື່ອຍເນົ່າ
ແລະດອກບານຂອງພວກເຂົາຈະປິວໄປຄືກັບຂີ້ຝຸ່ນດິນສັນນັ້ນ
ເພາະວ່າພວກເຂົາປະຖິ້ມພຣະບັນຍັດຂອງ ພຣະຜູ້ເປັນເຈົ້າ ແຫ່ງຈັກກະວານ
ແລະໄດ້ໝິ່ນປະໝາດພຣະຄຳຂອງອົງບໍລິສຸດແຫ່ງ ອິສຣາເອນ
25 ເຫດສະນັ້ນ ພຣະພິໂລດຂອງ ພຣະຜູ້ເປັນເຈົ້າ ຈຶ່ງພຸ່ງຂຶ້ນຕໍ່ສູ້ຊົນຊາດຂອງພຣະອົງ
ແລະພຣະອົງໄດ້ຢຽດພຣະຫັດຂອງພຣະອົງອອກຕໍ່ສູ້ພວກເຂົາ ແລະຕີພວກເຂົາ
ພູເຂົາທັງຫລາຍກໍສັ່ນສະເທືອນ ແລະຊາກສົບຂອງພວກເຂົາຖືກຈີກຂາດກາງຖະໜົນ
ເຖິງປານນັ້ນກໍຕາມ ພຣະພິໂລດຂອງພຣະອົງ ກໍບໍ່ໄດ້ຫັນກັບ
ແຕ່ພຣະຫັດຂອງພຣະອົງກໍຍັງຢຽດອອກຢູ່.
26 ພຣະອົງຈະຍົກທຸງສັນຍານໃຫ້ແກ່ປະຊາຊາດທີ່ຢູ່ຫ່າງໄກ
ແລະຈະຜິວພຣະໂອດເອີ້ນພວກເຂົາມາຈາກທີ່ສຸດປາຍແຜ່ນດິນໂລກ
ແລະເບິ່ງແມ ພວກເຂົາຈະມາຢ່າງວ່ອງໄວ ແລະຮີບຮ້ອນ.
27 ບໍ່ມີຜູ້ໃດໃນພວກເຂົາຈະອ່ອນເພຍ
ບໍ່ມີຜູ້ໃດຈະສະດຸດລົ້ມ ບໍ່ມີຜູ້ໃດຈະຫລັບສະໜິດ
ຫລື ຜ້າມັດແອວຈັກຜືນໜຶ່ງກໍຈະບໍ່ຫລຸດ ສາຍຮັດເກີບກໍຈະບໍ່ຂາດຈັກສາຍໜຶ່ງ
28 ລູກທະນູຂອງພວກເຂົາກໍແຫລມ ບັນດາຄັນທະນູຂອງພວກເຂົາກໍກົ່ງໄວ້
ງ່າມຕີນມ້າທັງຫລາຍຂອງພວກເຂົາຈະເປັນເໝືອນກັບຫີນເຫລັກໄຟ
ແລະລໍ້ຂອງພວກເຂົາຄືລົມຫົວກຸດ
29 ສຽງຮ້ອງຄາງຂອງພວກເຂົາຄືສຽງຮ້ອງຂອງສິງໂຕແມ່ ຄືສິງໜຸ່ມ
ພວກເຂົາເຫລົ່ານັ້ນຈະຮ້ອງແຜດສຽງ ແລະໂອບເຫຍື່ອຂອງຕົນ
ພວກເຂົາຈະຂົນເອົາໄປ ແລະບໍ່ມີຜູ້ໃດຊ່ວຍເຫຍື່ອນັ້ນໃຫ້ພົ້ນໄດ້.
30 ໃນມື້ນັ້ນ ພວກເຂົາທັງຫລາຍຈະຮ້ອງຢູ່ເໜືອເຫຍື່ອຄືສຽງຄະນອງຂອງນ້ຳທະເລ
ແລະຖ້າມີຜູ້ໜຶ່ງຜູ້ໃດເບິ່ງທີ່ແຜ່ນດິນ ເບິ່ງແມ ຄວາມມືດມິດ ກັບຄວາມທຸກໃຈ
ແລະຄວາມສະຫວ່າງແຫ່ງຟ້າສະຫວັນ ກໍມືດລົງ.

# ບົດທີ 6

## ພຣະເຈົ້າຊົງເລືອກເອຊາຢາເປັນຜູ້ປະກາດພຣະຄຳ

1ໃນປີທີ່ກະສັດ ອຸດຊີຢາ ສິ້ນພະຊົນນັ້ນ ຂ້າພະເຈົ້າໄດ້ເຫັນ ພຣະຜູ້ເປັນເຈົ້າ ຊົງປະທັບເທິງ
ບັນລັງສູງ ແລະສະຫງ່າລາສີ ເຄື່ອງສະຫລອງຂອງພຣະອົງໄດ້ເຕັມພຣະວິຫານ.
2ຢູ່ເໜືອພຣະອົງມີເທວະດາເຊລາພິມຫລາຍຕົນຢືນຢູ່ເຊລາພິມແຕ່ລະອົງມີປີກຫົກປີກ ເພິ່ນ
ເອົາສອງປີກປົກໜ້າ ສອງປີກປົກຕົວ ແລະອີກສອງປີກໃຊ້ບິນໄປ.
3ເທວະດານີ້ເອີ້ນໃສ່ກັນແລະກັນວ່າ,

“ບໍລິສຸດ! ບໍລິສຸດ! ບໍລິສຸດ!ພຣະຜູ້ເປັນເຈົ້າ ແຫ່ງຈັກກະວານຊົງບໍລິສຸດ
ພຣະລັດສະໝີຂອງພຣະອົງແຜ່ກະຈາຍໄປທົ່ວໂລກ.”

4ສຽງຮ້ອງຂອງພວກເພິ່ນໄດ້ເຮັດໃຫ້ຮາກຖານຂອງພຣະວິຫານສັ່ນສະເທືອນ ແລະມີຄວັນ
ເຕັມພຣະວິຫານນັ້ນ.
5ຂ້າພະເຈົ້າໄດ້ເວົ້າວ່າ, “ຂ້າພະເຈົ້າໄດ້ຮັບເຄາະແລະໝົດຫວັງແລ້ວ! ຄຳເວົ້າທຸກໆ ຄຳທີ່
ອອກຈາກປາກຂ້າພະເຈົ້າ ລ້ວນແຕ່ເປັນບາບ ຂ້າພະເຈົ້າຢູ່ນຳຊົນຊາດທີ່ເວົ້າແຕ່ບາບຫຍາບ
ຄາຍ ບັດນີ້ ຂ້າພະເຈົ້າໄດ້ເຫັນກະສັດ ຄືພຣະຜູ້ເປັນເຈົ້າ ແຫ່ງຈັກກະວານກັບຕາຕົນເອງແລ້ວ.”
6-7ຕໍ່ມາ ມີເທວະດາເຊລາພິມຕົນໜຶ່ງບິນມາຫາຂ້າພະເຈົ້າ ເທວະດາຕົນນີ້ໄດ້ຄີບຖ່ານໄຟ
ແດງມາຈາກແທ່ນບູຊາ ແລ້ວເອົາຖ່ານນັ້ນແປະໃສ່ປາກຂ້າພະເຈົ້າພ້ອມກັບເວົ້າວ່າ, “ສິ່ງນີ້ໄດ້
ຖືກປາກເຈົ້າແລ້ວ ຄວາມຜິດຂອງເຈົ້າກໍຖືກຍົກເລີກ ແລະບາບກໍໄດ້ຮັບອະໄພ.”
8ແລ້ວຂ້າພະເຈົ້າໄດ້ຍິນ ພຣະຜູ້ເປັນເຈົ້າ ຊົງຖາມວ່າ, “ເຮົາຈະໃຊ້ຜູ້ໃດໄປ? ໃຜຈະເປັນຜູ້ສົ່ງ
ຂ່າວຕາງເຮົາ?” ຂ້າພະເຈົ້າທູນຕອບວ່າ, “ຂ້ານ້ອຍຈະໄປດອກ ໂຜດໃຊ້ຂ້ານ້ອຍທ້ອນ.” 9ດ້ວຍ
ເຫດນີ້ ພຣະອົງຈຶ່ງຊົງສັ່ງຂ້າພະເຈົ້າໄປບອກປະຊາຊົນວ່າ,

“ເຖິງພວກເຈົ້າຈະຟັງຫລາຍປານໃດ ພວກເຈົ້າກໍຈະບໍ່ເຂົ້າໃຈ
ຈະເບິ່ງຄັກປານໃດ ກໍຈະບໍ່ຮູ້ວ່າແມ່ນຫຍັງຈະເກີດຂຶ້ນ.”

10 ແລ້ວພຣະອົງຊົງບອກຂ້າພະເຈົ້າວ່າ,

“ຈົ່ງເຮັດໃຫ້ຈິດໃຈຂອງຊົນຊາດນີ້ມືດມົນ ຫູໜວກ ຕາບອດ
ເພື່ອບໍ່ໃຫ້ພວກເຂົາເຫັນຮຸ່ງ ຫລືໄດ້ຍິນ
ແລະເຂົ້າໃຈໄດ້ ແລ້ວພວກເຂົາຈະບໍ່ກັບຄືນມາຫາເຮົາ ແລະຖືກຮັກສາໃຫ້ດີ.”

11 ຂ້າພະເຈົ້າໄດ້ທູນຖາມວ່າ,

“ຂ້າແດ່ພຣະຜູ້ເປັນເຈົ້າ ຈະໃຫ້ເປັນຢູ່ຢ່າງນີ້ເທິງປານໃດ?”

ພຣະອົງໄດ້ຕອບວ່າ,

“ຈົນເທົ່າທົ່ວເມືອງທັງຫລາຍຖືກທຳລາຍຮ້າງເປົ່າ
ໝູ່ບ້ານທັງຫລາຍບໍ່ມີຄົນອາໄສຢູ່
ແລະຜືນແຜ່ນດິນງຽບເຫງົາເປົ່າປ່ຽວ.

12 ເຮົາຈະກວາດຕ້ອນຜູງຄົນອອກໜີໄປໄກໆ

ໃຫ້ດິນດອນຕອນຫຍ້າໂສກເສົ້າເຫງົາຫງອຍ.
13 ເຖິງແມ່ນວ່າຍັງເຫລືອຄົນຢູ່ໃນນັ້ນພຽງໜຶ່ງໃນສິບກໍຈະຖືກທຳລາຍຄືກັນ
ຊຶ່ງຈະເປັນເໝືອນຕົ້ນສົນທີ່ຖືກຕັດເຫລືອແຕ່ຕໍ.”
ຕໍນັ້ນໝາຍເຖິງການຮື້ຟື້ນການເປັນໄພ່ພົນຂອງພຣະເຈົ້າຂຶ້ນໃໝ່.

# ບົດທີ 7

## ພະຄຳສຳລັບກະສັດອາຮາດ

1ໃນລາຊະການອາຮາດກະສັດຢູດານັ້ນ ສົງຄາມໄດ້ລະເບີດຂຶ້ນ (ອາຮາດເປັນໂອລົດຂອງ
ໂຢທາມ ແລະໂຢທາມເປັນໂອລົດຂອງອຸດຊີຢາ) ຄື ເຣຊິນກະສັດຊີເຣຍກັບເປກາ ໂອລົດ
ຂອງກະສັດເຣມາລີຢາແຫ່ງອິສຣາເອນ ໄດ້ເຂົ້າໂຈມຕີນະຄອນເຢຣູຊາເລັມ ແຕ່ພວກເພິ່ນບໍ່
ສາມາດຍຶດເອົາເມືອງນີ້ໄດ້. 2ເມື່ອກະສັດຢູດາຊົງຊາບຂ່າວວ່າ ກອງທັບຊີເຣຍໄດ້ຕຽມພ້ອມຢູ່
ໃນເຂດແດນອິສຣາເອນ ພຣະອົງພ້ອມທັງປະຊາຊົນກໍຢ້ານ ແລະໃຈສັ່ນເໝືອນຈະຂາດໃຈ
ຕາຍ.

3ພຣະຜູ້ເປັນເຈົ້າຊົງບອກເອຊາຢາວ່າ, “ເຈົ້າກັບເອຊາຢາຊຸບ ລູກຊາຍຂອງເຈົ້າ ຈົ່ງໄປເຝົ້າ
ກະສັດອາຮາດຢູ່ບ່ອນທີ່ຮ່ອງນ້ຳໄຫລມາສຸດ ເທິງຖະໜົນບ່ອນເຮັດແຜ່ນຜ້າ. 4ເພື່ອບອກໃຫ້
ເພິ່ນສະຫງົບຈິດສະບາຍໃຈ ຢ່າຢ້ານ ຫລືທຸກໃຈເລີຍ ເພາະວ່າ ຄວາມຄຽດແຄ້ນຂອງກະສັດ
ເປກາ ກະສັດເຣຊິນ ແລະປະຊາຊົນຊີເຣຍນັ້ນ ບໍ່ເປັນອັນຕະລາຍຮ້າຍແຮງຫຍັງດອກ ພວກ
ເຂົາເປັນເໝືອນໂດ້ນໄຟມອດ ຊຶ່ງຍັງແຕ່ຄວັນ. 5ຊີເຣຍພ້ອມທັງອິສຣາເອນກະສັດເປກາໄດ້
ຄິດການຊົ່ວຮ້າຍ ພວກເຂົາຕັ້ງໃຈຈະບຸກລຸກປະເທດຢູດາ. 6ເພື່ອໃຫ້ເຂົາຢ້ານ ແລະຍຶດເອົາ
ເປັນເມືອງຂຶ້ນ ແລ້ວຕັ້ງລູກຊາຍຂອງຕາເບເອນເປັນກະສັດປົກຄອງປະເທດນີ້. 7ແຕ່ເຮົາຄື
ພຣະຜູ້ເປັນເຈົ້າຂໍປະກາດວ່າ

“ເລື່ອງຈະບໍ່ເກີດຂຶ້ນດອກ
ເພາະວ່າຊີເຣຍບໍ່ມີກຳລັງລື່ນດາມາເຊ.
8 ແລະດາມາເຊກໍບໍ່ມີກຳລັງລື່ນກະສັດເຣຊິນ
ສ່ວນອິສຣາເອນນັ້ນ ກໍຈະສິ້ນສຸດຄວາມເປັນຊາດພາຍໃນຫົກສິບຫ້າປີ.
9 ເພາະອິສຣາເອນບໍ່ມີກຳລັງລື່ນນະຄອນຊາມາເຣຍ
ແລະຊາມາເຣຍກໍບໍ່ມີກຳລັງລື່ນກະສັດເປກາ.
ແນ່ນອນ ຖ້າຄວາມເຊື່ອຂອງເຈົ້າບໍ່ຫລາຍ ເຈົ້າກໍຈະຢູ່ບໍ່ໄດ້.”

## ໝາຍສຳຄັນກ່ຽວກັບເອມານູເອນ

10-11ພຣະຜູ້ເປັນເຈົ້າຊົງກ່າວຕໍ່ອາຮາດອີກວ່າ ຈົ່ງຂໍໃຫ້ພຣະຜູ້ເປັນເຈົ້າຂອງເຈົ້າສະແດງ
ໝາຍສຳຄັນຈາກແດນຄົນຕາຍ ຫລືຈາກຟ້າສະຫວັນໃຫ້ເຈົ້າເຫັນ. 12ອາຮາດໄດ້ທູນຕອບວ່າ,
“ຂ້ານ້ອຍຈະບໍ່ຂໍໃຫ້ສະແດງໝາຍສຳຄັນ ແລະຈະບໍ່ທົດລອງພຣະຜູ້ເປັນເຈົ້າ.” 13ເອຊາຢາຈຶ່ງ
ເວົ້າວ່າ, “ລາຊະວົງດາວິດເອີຍ ຈົ່ງຟັງເທີ້ນ ແຕ່ກີ້ເຈົ້າໄດ້ເຮັດໃຫ້ຄົນທັງຫລາຍບໍ່ພໍໃຈຈົນພວກ

ເຂົາອົດທົນບໍ່ໄດ້ ບັດນີ້ ເຈົ້າໄດ້ເຮັດໃຫ້ພຣະເຈົ້າຊົງອົດທົນບໍ່ໄດ້ອີກ. [14]ດ້ວຍເຫດນັ້ນ ພຣະຜູ້-
ເປັນເຈົ້າຈຶ່ງຈະຊົງສະແດງໝາຍສຳຄັນໃຫ້ເຈົ້າເຫັນດັ່ງນີ້ ຄືຍິງສາວຜູ້ໜຶ່ງຖືພາ ແລະອອກລູກ
ມາເປັນຊາຍ ນາງຈະຕັ້ງຊື່ໃຫ້ລູກນີ້ວ່າ, "ເອມານູເອນ" [15]ເມື່ອເວລາເພິ່ນໃຫຍ່ພໍຮູ້ຈັກຜິດຈັກຖືກ
ໄດ້ແລ້ວ ເພິ່ນຈະຮັບປະທານນ້ຳນົມ ແລະນ້ຳເຜິ້ງເປັນອາຫານ. [16]ກ່ອນເວລາເພິ່ນຮູ້ຈັກຄວາມ
ນັ້ນ ແຜ່ນດິນຂອງກະສັດສອງອົງທີ່ເຈົ້າຢ້ານຈະເພພັງຮ້າງເປົ່າ. [17]ພຣະຜູ້ເປັນເຈົ້າຈະຊົງບັນ-
ດານໃຫ້ມື້ອັນໂຫດຮ້າຍມາຖືກເຈົ້າ ຖືກປະຊາຊົນ ແລະພະລາຊະວັງຂອງເຈົ້າ ມື້ນັ້ນຈະໂຫດ-
ຮ້າຍກວ່າທຸກໆ ມື້ທີ່ເຄີຍມີມາ ຕັ້ງແຕ່ລາຊະອານາຈັກອິສຣາເອນແຍກອອກຈາກຢູດາ ຄືມື້ນັ້ນ
ກະສັດອັດຊີເຣຍຈະມາທຳລາຍ.

[18]ເມື່ອເວລານັ້ນມາເຖິງ ພຣະຜູ້ເປັນເຈົ້າຈະຊົງຜິວພຣະໂອດເອີ້ນເອົາຄົນເອຢິບມາຈາກຄົນ
ຕົ້ນກຳເນີດແມ່ນ້ຳນິນເໝືອນຝູງເຫລືອກມາ ແລະຜິວເອົາຄົນອັດຊີເຣຍມາຈາກປະເທດຂອງ
ພວກເຂົາເໝືອນຝູງເຜິ້ງ. [19]ພວກເຂົາຈະມາເຕັມຢູ່ໃນຮ່ອມພູ ໃນຖ້ຳ ໃນໂງ່ນຫີນ ໃນຟຸ່ມໄມ້
ແລະເດີ່ນຫຍ້າ.

[20]ເມື່ອເວລານັ້ນມາເຖິງ ພຣະຜູ້ເປັນເຈົ້າຈະຈ້າງເອົາຊ່າງຕັດຜົມຈາກແມ່ນ້ຳເອຟຣາດເບື້ອງ
ນັ້ນ ຄືກະສັດອັດຊີເຣຍ ເພິ່ນຈະແຖໜວດແຖຜົມ ແລະແຖຂົນໃນຕົນຕົວຂອງເຈົ້າຖິ້ມ.

[21-22]ເມື່ອເວລານັ້ນມາເຖິງ ແມ່ນແຕ່ຊາວນາທີ່ມີງົວນ້ອຍພຽງແຕ່ໂຕດຽວ ແລະມີແບ້ພຽງສອງ
ໂຕ ກໍຈະມີນ້ຳນົມກິນພຽງພໍກັບຄວາມຕ້ອງການ ແລະຄົນທັງປວງທີ່ລອດຊີວິດເຫລືອຢູ່ໃນປະ-
ເທດ ຈະໄດ້ກິນນ້ຳນົມ ແລະນ້ຳເຜິ້ງເປັນອາຫານ.

[23]ເມື່ອເວລານັ້ນມາເຖິງ ສວນດີທີ່ມີຕົ້ນອະງຸ່ນພັນຕົ້ນ ແລະມີລາຄາໜຶ່ງພັນຫລຽນ ກໍຈະເຕັມ
ໄປດ້ວຍໜາມ ແລະໄມ້. [24]ທັງຈະບໍ່ມີໃຜກ້າໄປໃນສວນນັ້ນ ເວັ້ນໄວ້ແຕ່ຜູ້ທີ່ມີໜ້າທະນູເປັນອາ-
ວຸດ ຈຶ່ງຈະໄປໄດ້ ທົ່ວທັງປະເທດຈະເຕັມໄປດ້ວຍໄມ້ ແລະຕົ້ນໜາມ. [25]ພູທຸກໜ່ວຍທີ່ເຄີຍປູກຢູ່
ທຳກິນຈະມີແຕ່ໜາມ ຈະບໍ່ມີໃຜຂຶ້ນໄປທີ່ນັ້ນ ມັນຈະເປັນບ່ອນງົວຄວາຍ ແລະແກະກິນຫຍ້າ.

# ບົດທີ 8

## ລູກຊາຍຂອງເອຊາຢາ

[1]ພຣະຜູ້ເປັນເຈົ້າຊົງກ່າວຕໍ່ຂ້າພະເຈົ້າວ່າ, "ຈົ່ງເອົາປ້າຍແຜ່ນໃຫຍ່ມາແຜ່ນໜຶ່ງ ແລ້ວຂຽນ
ໜັງສືໂຕໃຫຍ່ລົງໃສ່ວ່າ ມາເຮີຊາລານຫັດສະບັດ. [2]ແລ້ວໃຫ້ເອົາຄົນທີ່ໄວ້ໃຈໄດ້ສອງຄົນ ຄື
ປະໂລຫິດອູຣີຢາ ແລະ ເຊຄາຣີຢາ ລູກຊາຍຂອງເຢເບເຣກີຢາມາເປັນພະຍານ."

[3]ແລ້ວຂ້າພະເຈົ້າກໍສົມສູ່ຢູ່ຮ່ວມກັບພັນລະຍາຂອງຂ້າພະເຈົ້າ ນາງຈຶ່ງຖືພາ ແລະອອກລູກມາ
ເປັນຜູ້ຊາຍ ພຣະຜູ້ເປັນເຈົ້າຊົງບອກຂ້າພະເຈົ້າວ່າ, [4]"ຈົ່ງເອີ້ນຊື່ມັນວ່າ ມາເຮີຊາລານຫັດສະ
ບັດ ເພາະກ່ອນເດັກນ້ອຍຜູ້ນີ້ໃຫຍ່ຂຶ້ນມາພໍຮູ້ຈັກເອີ້ນພໍ່ແມ່ໄດ້ ຊັບສົມບັດທັງໝົດໃນເມືອງດາ-
ມາເຊ ແລະສິ່ງຂອງທີ່ຍາດຊີງມາໄດ້ຈາກຊາມາເຣຍ ຈະຖືກກະສັດອັດຊີເຣຍຍຶດເອົາໄປໝົດ."

## ກະສັດອັດຊີເຣຍຈະສະເດັດມາ

[5-6]ພຣະຜູ້ເປັນເຈົ້າຊົງກ່າວວ່າ, "ຍ້ອນວ່າປະຊາຊົນເຫລົ່ານີ້ປະຕິເສດຮ່ອງນ້ຳຊີໂລອາທີ່ງຽບ

ສະຫງັດ ແລະຢ້ານກົວກະສັດອັດຊີເຣຍ ແລະກະສັດເປກາ. [7]ເຮົາຄືພຣະຜູ້ເປັນເຈົ້າ ຈຶ່ງຈະ
ໃຫ້ກະສັດອັດຊີເຣຍພ້ອມກອງທັບທັງໝົດຂອງພະອົງມາໂຈມຕີຢູດາ ກອງທັບນີ້ຈະບຸກລຸກໄປ
ເໝືອນນໍ້າເອຟຣາດໄຫລນອງລົ້ນຕາຝັ່ງ. [8]ຄືນຢູດາຈະຖືກກວາດເອົາໄປເໝືອນກັບຖືກກະແສ-
ນໍ້າພັດ ກອງທັບນີ້ຈະຂະຫຍາຍໄປທົ່ວເຂດແດນ ແລະຄອບຄຸມທຸກໆ ສິ່ງ." ແຕ່ວ່າ ພຣະເຈົ້າ
ຊົງຢູ່ກັບເຮົາ! ປີກຂອງພຣະອົງຊົງປົກຄຸມແຜ່ນດິນນັ້ນ.

[9] ຊົນຊາດທັງຫລາຍເອີຍ ພວກເຈົ້າຈົ່ງພາກັນຢ້ານ!
ບັນດາປະເທດໄກທັງໝົດຈົ່ງຟັງເດີ້! ຈົ່ງຕຽມຕົວສູ້ ແຕ່ຈົ່ງຢ້ານ!
[10] ຈົ່ງວາງແຜນໄວ້ ແຕ່ຈະບໍ່ສຳເລັດ ຈົ່ງປຶກສາຫາລືກັນ!
ແຕ່ມັນຈະບໍ່ມີປະໂຫຍດຫຍັງ ເພາະວ່າພຣະຜູ້ເປັນເຈົ້າຊົງຢູ່ກັບເຮົາ.

## ພຣະຜູ້ເປັນເຈົ້າຊົງເຕືອນຜູ້ປະກາດພຣະທຳ

[11]ພຣະຜູ້ເປັນເຈົ້າຊົງເຕືອນຂ້າພະເຈົ້າດ້ວຍລິດທານຸພາບອັນຍິ່ງໃຫຍ່ຂອງພຣະອົງວ່າ ບໍ່ໃຫ້
ເຮັດຕາມທາງທີ່ຊົນຊາດນີ້ເຮັດກັນ ພຣະອົງຊົງບອກວ່າ,

[12] "ຢ່າຮ່ວມແຜນການກະບົດນຳປະຊາຊົນນີ້ ແລະຢ່າຢ້ານສິ່ງທີ່ພວກເຂົາຢ້ານ.
[13] ຈົ່ງລະນຶກວ່າ ເຮົາພຣະຜູ້ເປັນເຈົ້າແຫ່ງຈັກກະວານຊົງບໍລິສຸດ
ເຮົາຜູ້ດຽວທີ່ເຈົ້າຈະຕ້ອງຢ້ານ.
[14] ຍ້ອນວ່າຄວາມບໍລິສຸດອັນເຕັມຂະໜາດຂອງເຮົານັ້ນ
ເຮົາຈຶ່ງເປັນເໝືອນຫີນທີ່ຕຳຕີນປະຊາຊົນ
ແລະເປັນເໝືອນແຮ້ວທີ່ຫ້າງໃສ່ປະຊາຊົນຢູດາ
ໃສ່ອິສຣາເອນ ແລະ ເຢຣູຊາເລັມ.
[15] ມີຫລາຍຄົນຈະຕຳສະດຸດລົ້ມ ພວກເຂົາຈະຖືກບ້ວງແຮ້ວ
ແລະລົ້ມລົງເປັນບາດແຜ."

## ເຕືອນບໍ່ໃຫ້ຖາມເອົາຄວາມນຳຜີ

[16]ພວກສາວົກທັງຫລາຍເອີຍ ຈົ່ງປະພຶດປະຕິບັດພະຄຳທີ່ພຣະເຈົ້າຊົງປະທານໃຫ້ຂ້າພະເຈົ້າ
ນັ້ນເດີ້. [17]ພຣະຜູ້ເປັນເຈົ້າຊົງລີ້ບໍ່ໃຫ້ໄພ່ພົນຂອງພຣະອົງເຫັນ ແຕ່ຂ້າພະເຈົ້າກໍເຊື່ອໄວ້ວາງໃຈ
ໃນພຣະອົງ. [18]ຂ້າພະເຈົ້າຢູ່ທີ່ນີ້ກັບພວກລູກທີ່ພຣະຜູ້ເປັນເຈົ້າຊົງປະທານໃຫ້ ພຣະຜູ້ເປັນເຈົ້າ
ແຫ່ງຈັກກະວານຊົງປະທັບຢູ່ບັນລັງເທິງພູຊີໂອນ ຂ້າພະເຈົ້າກັບພວກລູກຊາຍເປັນເໝືອນພຣະ-
ຄຳທີ່ເປັນໝາຍສຳຄັນ ຕໍ່ຊາວອິສຣາເອນ. [19]ປະຊາຊົນຈະບອກໃຫ້ພວກທ່ານຖາມເອົາຄວາມ
ຈາກພວກໝໍມໍ ແລະໝໍຜີຊຶ່ງເວົ້າອອດໆ ແອດໆ ຢູ່ໃນລຳຄໍ ພວກເຂົາຈະບອກວ່າ, "ກ່ອນອື່ນ
ໝົດ ປະຊາຊົນຄວນຈະຖາມເອົາຄວາມນຳຜີ ແລະປຶກສານຳຄົນຕາຍແທນຄົນເປັນ." [20]ພວກ
ທ່ານຈົ່ງຕອບພວກເຂົາວ່າ, "ຈົ່ງຟັງພຣະຄຳທີ່ພຣະຜູ້ເປັນເຈົ້າຊົງປະທານໃຫ້ ຢ່າຟັງຄວາມຜີ
ເພາະວ່າ ສິ່ງທີ່ພວກເຂົາບອກໃຫ້ເຈົ້າເຮັດນັ້ນ ມັນບໍ່ດີ."

## ເວລາທີ່ຍາກລຳບາກ

[21-22]ປະຊາຊົນຈະຊັດເຊພະເນຈອນໄປທົ່ວທັງປະເທດດ້ວຍຄວາມໝົດຫວັງ ແລະອຶດຢາກ

ເມື່ອພວກເຂົາຫິວ ພວກເຂົາຈະຄຽດແຄ້ນ ແລະປ້ອຍດ່າກະສັດກັບພຣະເຈົ້າຂອງຕົນ ພວກເຂົາອາດຈະເງີຍໜ້າຂຶ້ນຟ້າ ຫລືກົ້ມລົງດິນ ແຕ່ຈະບໍ່ທັນເຫັນຫຍັງ ຈະມີແຕ່ຄວາມທຸກໃຈ ແລະຄວາມມືດ ພວກເຂົາຈະຖືກຂັບໄລ່ໄປໃນຄວາມມືດອັນໜ້າຢ້ານກົວ ແລະຈະໜີໄປໃຫ້ພົ້ນຈາກເວລາອັນຍາກລຳບາກນີ້ກໍບໍ່ໄດ້.

# ບົດທີ 9

## ກະສັດໃນອະນາຄົດ

1 ແຜ່ນດິນຂອງຕະກູນເຊບູລູນ ແລະນັບທາລີເຄີຍເຊື່ອມເສຍສັກສີມາເທື່ອໜຶ່ງແລ້ວ ແຕ່ໃນ
ພາຍຄັ້ງໜ້າ ແຜ່ນດິນນີ້ຕັ້ງແຕ່ທະເລ ເມດິແຕຣາເນ ເບື້ອງຕາເວັນອອກທາຟາກ ແມ່ນ້ຳ ຢໍແດນ
ເບື້ອງນັ້ນ ແລະເຖິງຄາລີເລ ບ່ອນຊາວຕ່າງດ້າວອາໄສຢູ່ ຈະໄດ້ຮັບຄວາມຈະເລີນຮຸ່ງເຮືອງ.

2 ປະຊາຊົນຜູ້ດຳເນີນຢູ່ໃນຄວາມມືດ
ກໍໄດ້ຮັບແສງສະຫວ່າງຢ່າງຫລວງຫລາຍ
ພວກເຂົາຢູ່ໃນແຜ່ນດິນມືດ
ແຕ່ບັດນີ້ແສງສະຫວ່າງໄດ້ສ່ອງເຖິງພວກເຂົາແລ້ວ.
3 ຂ້າແດ່ພຣະຜູ້ເປັນເຈົ້າພຣະອົງຊົງໃຫ້ພວກເຂົາມີ
ຄວາມມ່ວນຊື່ນຫລາຍ
ຊົງໃຫ້ພວກເຂົາໄດ້ຮັບຄວາມສຸກ
ພວກເຂົາຍິນດີໃນສິ່ງທີ່ພຣະອົງຊົງກະທຳ
ເໝືອນດັ່ງຄົນຍິນດີເມື່ອຍາມເກັບກ່ຽວ
ຫລືເໝືອນດັ່ງຄາວທີ່ພວກເຂົາແບ່ງປັນຂອງທີ່ຍຶດມາໄດ້.
4 ເພາະວ່າພຣະອົງຊົງຫັກແອກທີ່ເຮັດໃຫ້ພວກເຂົາໜັກໜ່ວງ
ກັບໄມ້ແສ້ທີ່ພາດບ່າພວກເຂົານັ້ນ
ຂ້າແດ່ພຣະຜູ້ເປັນເຈົ້າພຣະອົງຊົງທຳລາຍຊົນຊາດ
ທີ່ກົດຂີ່ຂົ່ມເຫັງໄພ່ພົນຂອງພຣະອົງ
ຢ່າງດຽວກັນກັບຊົງທຳລາຍກອງທັບຂອງ
ມີດີອານ ແຕ່ດົນນານມາແລ້ວ.
5 ເກີບທຸກຄູ່ຂອງທະຫານທີ່ຮຸກຮານ
ພ້ອມທັງເສື້ອທຸກໂຕທີ່ເປື້ອນເປິດ້ວຍເລືອດ
ຈະຖືກເຜົາໄຟທຳລາຍຖິ້ມໝົດ.
6 ເດັກນ້ອຍຜູ້ໜຶ່ງໄດ້ເກີດມາໃຫ້ເຮົາແລ້ວ
ຊົງປະທານລູກຊາຍຜູ້ໜຶ່ງໃຫ້ເຮົາ
ແລະພຣະອົງຈະຊົງເປັນຜູ້ປົກຄອງຂອງເຮົາ
ພຣະນາມຂອງພຣະອົງຄື "ທີ່ປຶກສາທີ່ສະຫລາດ

ຫລັກແຫລມ” “ພຣະເຈົ້າຜູ້ຊົງລິດ”
ອົງເປັນພຣະບິດາຕະຫລອດໄປ “ອົງສັນຕິລາດ.”
7 ພຣະລາຊະອຳນາດຂອງພຣະອົງຈະເພີ່ມພູນຂຶ້ນເລື້ອຍໆ
ລາຊະອານາຈັກຂອງພຣະອົງຈະມີຄວາມສະຫງົບສຸກຕະຫລອດໄປ
ພຣະອົງຈະປົກຄອງສືບຕໍ່ກະສັດດາວິດ
ຈະຊົງໃຫ້ອຳນາດຢ່າງຖືກຕ້ອງ ແລະຍຸດຕິທຳ
ເລີ່ມແຕ່ບັດນີ້ຈົນເຖິງເທົ່າອາວະສານ
ພຣະຜູ້ເປັນເຈົ້າອົງຍິ່ງໃຫຍ່ຈະຊົງກະທຳການນີ້ທັງໝົດ
ດ້ວຍຄວາມຫວງແຫນ.

## ພຣະຜູ້ເປັນເຈົ້າຊົງລົງໂທດອິສຣາເອນ

8 ພຣະຜູ້ເປັນເຈົ້າໄດ້ຊົງພິພາກສາໂທດລາຊະອານາຈັກອິສຣາເອນ
ຄືເຊື້ອສາຍຂອງຢາໂຄບແລ້ວ.
9 ຄົນອິສຣາເອນທັງໝົດ ຮ່ວມທັງທຸກໆຄົນທີ່ອາໄສຢູ່ໃນເມືອງຊາມາເຣຍ
ຈະຮູ້ວ່າພຣະອົງໄດ້ຊົງກະທຳການນີ້ແລ້ວ
ຄືພວກເຂົາໄດ້ກ່າວດ້ວຍຄວາມຍິ່ງຈອງຫອງວ່າ,
10 ຕຶກທີ່ສ້າງດ້ວຍດິນໄດ້ເພພັງລົງແລ້ວ ແຕ່ເຮົາຈະສ້າງໃໝ່ດ້ວຍຫີນ
ຕົ້ນເດື່ອຖືກຕັດລົງແລ້ວ ແຕ່ເຮົາຈະເອົາຕົ້ນສົນໃສ່ແທນໄວ້.”
11 ພຣະຜູ້ເປັນເຈົ້າໄດ້ຊົງປຸກປັ່ນພວກສັດຕູອິສຣາເອນ
ໃຫ້ຕໍ່ສູ້ພວກເຂົາ.
12 ຄືພວກຊີເຣຍຢູ່ທາງທິດຕາເວັນອອກ ແລະພວກຟີລິດສະຕິນຢູ່ທາງທິດຕາເວັນຕົກ
ຈະອ້າປາກກືນກິນອິສຣາເອນ
ເຖິງປານນັ້ນ ພຣະພິໂລດຂອງພຣະອົງກໍຈະຍັງບໍ່ສິ້ນສຸດ
ແລະພຣະຫັດກໍຈະຍັງຢຽດອອກລົງໂທດພວກເຂົາຢູ່.
13 ເຖິງແມ່ນວ່າພຣະຜູ້ເປັນເຈົ້າແຫ່ງຈັກກະວານໄດ້ຊົງລົງໂທດອິສຣາເອນແລ້ວກໍຕາມ
ພວກເຂົາກໍຍັງບໍ່ໄດ້ປ່ຽນໃຈກັບຄືນມາຫາພຣະອົງເລີຍ.
14 ພຣະຜູ້ເປັນເຈົ້າຊົງລົງໂທດພວກຜູ້ນຳອິສຣາເອນກັບປະຊາຊົນໃຫ້ໝົດໄປໃນມື້ດຽວ
ຄືຈະຕັດຫົວຕັດຕີນພວກເຂົາຖິ້ມ.
15 ຫົວນັ້ນແມ່ນຜູ້ອາວຸໂສ ແລະຄົນມີກຽດ
ຕີນແມ່ນຜູ້ປະກາດພຣະຄຳທີ່ສອນເທັດ.
16 ພວກເຂົາໄດ້ນຳປະຊາຊົນເຫລົ່ານີ້ໄປໃນທາງຜິດແລະສັບສົນວຸ້ນວາຍ.
17 ດັ່ງນັ້ນພຣະຜູ້ເປັນເຈົ້າຈຶ່ງຈະບໍ່ຊົງໃຫ້ຄົນໜຸ່ມຄົນໃດໜີພົ້ນໄປໄດ້
ທັງຈະບໍ່ຊົງເມດຕາສົງສານແມ່ໝ້າຍ ແລະລູກກຳພ້າຄົນໃດເລີຍ
ເພາະວ່າທຸກໆ ຄົນບໍ່ມີພຣະເຈົ້າພວກເຂົາເຮັດ ແລະເວົ້າທຸກຢ່າງຊົ່ວຮ້າຍ

ດ້ວຍເຫດນັ້ນພຣະຜູ້ເປັນເຈົ້າຈຶ່ງບໍ່ເຊົາພິໂລດ
ແຕ່ຈະຍັງຢຽດພຣະຫັດອອກມາລົງໂທດພວກເຂົາຢູ່.
18 ຄວາມຊົ່ວຮ້າຍຂອງປະຊາຊົນນີ້ ໄດ້ລຸກລາມຂຶ້ນເປັນແປວເໝືອນໄຟໄໝ້ປ່າ.
19 ຍ້ອນວ່າພຣະຜູ້ເປັນເຈົ້າແຫ່ງຈັກກະວານຊົງພຣະພິໂລດ
ພຣະອົງຈຶ່ງຊົງລົງໂທດແຜ່ນດິນ
ແລະປະຊາຊົນນັ້ນກໍເປັນເໝືອນໄຟເຜົາຜານ ໂດຍບໍ່ມີໃຜຢາກຊ່ອຍເຫລືອເລີຍ.
20 ປະຊາຊົນທັງປະເທດໄດ້ເກັບເລັມເອົາອາຫານມາກິນບ່ອນລະໜ້ອຍຕາມທີ່ຫາໄດ້
ແຕ່ພວກເຂົາກໍບໍ່ອີ່ມ ພວກເຂົາຈຶ່ງກິນຮອດອ້າຍນ້ອງຂອງຕົນເອງ.
21 ປະຊາຊົນມານາເຊໄດ້ສູ້ຮົບກັບເອຟຣາຢິມ
ແລະທັງສອງຍັງຮ່ວມກັນຕໍ່ສູ້ຢູດາອີກ
ເຖິງປານນັ້ນພຣະຜູ້ເປັນເຈົ້າກໍຍັງບໍ່ເຊົາພິໂລດ
ແຕ່ຍັງຢຽດພຣະຫັດມາລົງໂທດພວກເຂົາຢູ່.

# ບົດທີ 10

## ລາຊະອານາຈັກສັນຕິສຸກ

1 ວິບັດແກ່ຄົນເຫລົ່ານັ້ນທີ່ອອກກົດໝາຍອະທຳ
ແລະຜູ້ຂຽນທີ່ຂຽນແຕ່ການບີບບັງຄັບຕະຫລອດ.
2 ເພື່ອຫັນຄົນຂັດສົນໄປຈາກຄວາມຍຸດຕິທຳ
ແລະປຸ້ນເອົາສິດຂອງຄົນຍາກຈົນແຫ່ງຊົນຊາດຂອງເຮົາ
ເພື່ອວ່າແມ່ໝ້າຍຈະເປັນເຫຍື່ອຂອງພວກເຂົາ
ແລະເພື່ອພວກເຂົາຈະປຸ້ນຄົນກຳພ້າພໍ່ເສຍ.
3 ພວກເຈົ້າຈະເຮັດຢ່າງໃດໃນວັນແຫ່ງການພິພາກສາ
ລົງໂທດ ແລະໃນການກວາດລ້າງຊຶ່ງຈະມາຈາກທີ່ໄກ
ເຈົ້າຈະໜີໄປເພິ່ງໃຜ ແລະເຈົ້າຈະຝາກສະຫງ່າລາສີຂອງເຈົ້າໄວ້ຢູ່ໃສ.
4 ຫາກປາດສະຈາກເຮົາ ພວກເຂົາຈະຂາບລົງຢູ່ກັບນັກໂທດ.
ພວກເຂົາຈະລົ້ມລົງໃນໝູ່ຄົນທີ່ຖືກຂ້າ
ເຖິງປານນັ້ນ ພຣະພິໂລດຂອງພຣະອົງກໍຍັງບໍ່ໄດ້ຫັນກັບ
ແລະພຣະຫັດຂອງພຣະອົງຍັງຢຽດອອກຢູ່.
5 ໂອ ຊາວອັດຊີເລຍເອີຍ ຜູ້ເປັນໄມ້ຄ້ອນແຫ່ງຄວາມໂກດຮ້າຍຂອງເຮົາ
ແລະໄມ້ຄ້ອນເທົ້າໃນມືຂອງພວກເຂົາ ແມ່ນຄວາມຢາກຮ້າຍຂອງເຮົາ.
6 ເຮົາຈະໃຊ້ພວກເຂົາໄປສູ້ປະຊາຊາດທີ່ໜ້າຊື່ໃຈຄົດ
ເຮົາຈະບັນຊາພວກເຂົາໃຫ້ໄປສູ້ກັບຊົນຊາດທີ່ເຮົາໂກດຮ້າຍ
ເພື່ອປຸ້ນຈີ້, ຈັບເຫຍື່ອ ແລະໃຫ້ຢຽບຢ່ຳລົງເໝືອນຢ່າງຢຽບຂີ້ຝຸ່ນດິນຢູ່ເທິງຖະໜົນ.

7 ລາວບໍ່ໄດ້ຕັ້ງໃຈຢ່າງນັ້ນ ແລະຈິດໃຈຂອງລາວກໍບໍ່ໄດ້ຄິດຢ່າງນັ້ນ
ແຕ່ໃນໃຈຂອງລາວກໍຄິດຢາກທຳລາຍ ແລະຕັດປະຊາຊາດນັ້ນເສຍ.
8 ເພາະລາວເວົ້າວ່າ, “ຜູ້ບັງຄັບບັນຊາຂອງຂ້ອຍກໍເປັນກະສັດໝົດ ບໍ່ແມ່ນບໍ.”
9 ເມືອງ ການໂນ ກໍເໝືອນກັບເມືອງ ກາເກມິດ ບໍ່ແມ່ນບໍ.
ເມືອງ ຮາມັດ ກໍເໝືອນກັບເມືອງ ອາປາດ ບໍ່ແມ່ນບໍ.
ເມືອງ ຊາມາເຣຍ ກໍເໝືອນກັບເມືອງ ດາມາເຊ ບໍ່ແມ່ນບໍ
10 ເໝືອນກັບມືຂອງເຮົາ ທີ່ໄປເຖິງບັນດາລາຊະອານາຈັກຂອງຮູບ
ຊຶ່ງຮູບແກະສະຫລັກຂອງພວກເຂົານັ້ນກໍໃຫຍ່ກວ່າຂອງ ເຢຣູຊາເລັມ ແລະ ຊາມາເຣຍ
11 ເຮົາກໍຈະບໍ່ເຮັດແກ່ ເຢຣູຊາເລັມ ແລະຮູບເຄົາລົບຂອງເຂົາດອກບໍ?
ເໝືອນກັບທີ່ເຮົາໄດ້ເຮັດແກ່ຊາມາເຣຍ ແລະຮູບເຄົາລົບຂອງພວກເຂົາ”
12ຕໍ່ ມາ ເມື່ອ ອົງ ພຣະຜູ້ເປັນເຈົ້າ ສຳເລັດ ພະ ລາຊະ ກິດ ທັງ ໝົດ ຂອງ ພຣະອົງ ທີ່ ພູເຂົາ ຊີໂອນ
ແລະຢູ່ທີ່ ເຢຣູຊາເລັມ ແລ້ວ ເຮົາຈະລົງໂທດ ແກ່ຈິດໃຈທີ່ຈອງຫອງຂອງກະສັດ ແຫ່ງ ອັດຊີເຣຍ
ແລະຄວາມອວດອົ່ງທະນົງຕົວຂອງເຂົາ 13ເພາະວ່າກະສັດນັ້ນໄດ້ກ່າວວ່າ
“ຂ້ອຍໄດ້ກະທຳການນີ້ດ້ວຍກຳລັງມືຂອງຂ້ອຍ
ແລະດ້ວຍສະຕິປັນຍາ ຂອງຂ້ອຍ ເພາະວ່າຂ້ອຍມີຄວາມເຂົ້າໃຈ
ຂ້ອຍໄດ້ຖອນເຂດແດນຂອງຊົນຊາດທັງຫລາຍ ແລະໄດ້ປຸ້ນຊັບສົມບັດຂອງເຂົາ
ຂ້ອຍໄດ້ຖິ້ມບັນດາຊາວເມືອງລົງມາຢ່າງຄົນກ້າຫານ (ເໝືອນງົວເຖິກ)
14 ມືຂອງຂ້ອຍໄດ້ພົບຊັບສົມບັດຂອງຊົນຊາດທັງຫລາຍ
ເໝືອນພົບຮັງນົກແລະຄົນເກັບໄຂ່ທີ່ປະຖິ້ມໄວ້
ຂ້ອຍກໍຮວບຮວມແຜ່ນດິນໂລກທັງໝົດແລະບໍ່ມີຜູ້ໃດເໜັງປີກ
ຫລືອ້າປາກຫລືຮ້ອງສຽງດັງ”
15 ຂວານຈະເວົ້າກັບຄົນທີ່ໃຊ້ມັນຖາກນັ້ນບໍ?
ຫລືເລື່ອຍຈະຍົກຍໍໂຕຂຶ້ນຕໍ່ສູ້ຜູ້ທີ່ໃຊ້ມັນເລື່ອຍນັ້ນບໍ?
ຄືກັນກັບວ່າໄມ້ແສ້ຈະຍົກຜູ້ຊຶ່ງຖືມັນຂຶ້ນຕີບໍ?
ໄມ້ຄ້ອນຈະຍົກຕົວຂຶ້ນເໝືອນກັບວ່າມັນບໍ່ເຮັດດ້ວຍໄມ້
16 ສະນັ້ນ ອົງພຣະຜູ້ເປັນເຈົ້າພຣະເຈົ້າ ແຫ່ງຈັກກະວານ
ຈະໃຫ້ພະຍາດຈ່ອຍແຫ້ງເຂົ້າມາໃນໝູ່ຄົນອ້ວນພີຂອງເຂົາ
ພາຍໃຕ້ກຽດຂອງເຂົາຈະມີການໄໝ້ທີ່ໃຫຍ່ໂຕເໝືອນໄຟໄໝ້
17 ຄວາມສະຫວ່າງ ແຫ່ງ ອິສຣາເອນ ຈະເປັນໄຟ
ແລະອົງບໍລິສຸດຂອງທ່ານຈະກາຍເປັນແປວໄຟ ແລະຈະເຜົາ
ແຕ່ເຄືອໜາມໃຫຍ່ແລະເຄືອໜາມນ້ອຍຂອງພວກເຂົາໃນມື້ດຽວ
18 ພຣະອົງຈະທຳລາຍຄວາມອຸດົມສົມບູນແຫ່ງປ່າຂອງພວກເຂົາ
ແລະສວນຫມາກໄມ້ຂອງພວກເຂົາ ທັງຈິດວິນຍານແລະຮ່າງກາຍ

ຈະເປັນເໝືອນກັບເວລາຄົນເຈັບປ່ວຍຢູ່ທີ່ຈະບໍ່ດີຈັກເທື່ອ
19 ກົກໄມ້ໃນປ່າຂອງພວກເຂົາຈະເຫລືອນ້ອຍຫລາຍ
ຈົນເດັກນ້ອຍຜູ້ນຶ່ງຈະຂຽນໄວ້ລົງໄດ້

## ຄົນອິສຣາເອນທີ່ເຫລືອຢູ່ໃນສະໄໝຄວາມທຸກລຳບາກອັນໃຫຍ່

20ແລະຕໍ່ມາໃນມື້ນັ້ນ ຊາວອິສຣາເອນທີ່ຍັງເຫລືອຢູ່ ແລະຈຳພວກຄົນທີ່ໜີລອດໄປຂອງ
ຄອບຄົວຂອງຢາໂຄບ ຈະບໍ່ໄດ້ເພິ່ງຜູ້ທີ່ໂຈມຕີພວກເຂົາອີກ ແຕ່ຈະເພິ່ງພຣະຜູ້ເປັນເຈົ້າອົງບໍລິ-
ສຸດຂອງອິສຣາເອນໂດຍຄວາມຈິງ 21ສ່ວນຄົນທີ່ເຫລືອຢູ່ຂອງຢາໂຄບຈະກັບມາຫາພຣະເຈົ້າຜູ້
ມີລິດອຳນາດ 22ພວກເຈົ້າຊາວອິສຣາເອນເອີຍ ເຖິງວ່າຊົນຊາດຂອງເຈົ້າຈະເປັນດັ່ງເມັດຊາຍ
ໃນທະເລ ຄົນທີ່ເຫລືອຢູ່ເທົ່ານັ້ນຈະກັບຄືນມາ ການເຜົາຜານຊຶ່ງກຳນົດໄວ້ແລ້ວຈະຖ້ວມລົ້ນໄປ
ດ້ວຍຄວາມຊອບທຳ 23ເພາະວ່າອົງພຣະຜູ້ເປັນເຈົ້າ ພຣະເຈົ້າແຫ່ງຈັກກະວານຈະເຮັດໃຫ້ການ
ເຜົາຜານນັ້ນສິ້ນສຸດລົງຕາມທີ່ກຳນົດໄວ້ແລ້ວໃນຖ້າມກາງແຜ່ນດິນທັງໝົດ

24ສະນັ້ນ ອົງພຣະຜູ້ເປັນເຈົ້າ ພຣະເຈົ້າແຫ່ງຈັກກະວານບອກດັ່ງນີ້ວ່າ "ຊົນຊາດຂອງເຮົາ
ເອີຍຜູ້ທີ່ຢູ່ໃນເມືອງ ຊີໂອນ ຢ່າຢ້ານຄົນອັດຊີເຣຍ ພວກເຂົາຈະຕີເຈົ້າດ້ວຍໄມ້ແສ້ແລະຈະຍົກ
ໄມ້ຄ້ອນຂອງພວກເຂົາຂຶ້ນຕໍ່ສູ້ພວກເຈົ້າ ເໝືອນຢູ່ໃນເອຢິບ 25ເພາະວ່າຍັງອີກບໍ່ດົນຄວາມໂກດ
ຮ້າຍນັ້ນຈະສິ້ນສຸດ (ການລົງໂທດຈະສຳເລັດ ແລະຄວາມຄຽດຂອງເຮົາ ຈະເຮັດໃຫ້ພວກອັດ-
ຊີເຣຍຈິບຫາຍໄປ 26ແລະພຣະຜູ້ເປັນເຈົ້າແຫ່ງຈັກກະວານຈະແກວ່ງແສ້ມາເພື່ອສູ້ກັບພວກເຂົາ
ເໝືອນດັ່ງທີ່ພຣະອົງໄດ້ໂຈມຕີຄົນ ມີດີອານໃນໂງ່ນຫີນໂອເຣັບ ແລະໄມ້ຄ້ອນຂອງພຣະອົງນັ້ນ
ຈະຍົກຂຶ້ນເໜືອທະເລ, ພຣະອົງຈະຍົກຂຶ້ນເໝືອນກັບໃນປະເທດເອຢິບ 27ແລະຕໍ່ມາໃນມື້ນັ້ນ
ພາລະໜັກຂອງພວກເຂົາຈະຖືກຍົກໄປຈາກບ່າຂອງພວກເຈົ້າ ແລະແອກຂອງພວກເຂົາ ຈະຖືກ
ຫັກຈາກຄໍຂອງພວກເຈົ້າ ແລະແອກນັ້ນຈະຖືກທຳລາຍຍ້ອນການຊົງເຈີມ (ນ້ຳມັນຊະໂລມຫາ)"

28 ພວກເຂົາໄດ້ມາຮອດອາອີແລ້ວ ພວກເຂົາໄດ້ຂ້າມມິກໂຣນ
ພວກເຂົາປະສິ່ງຂອງ ຂອງພວກເຂົາໄວ້ໃນເມືອງມິກມາດ
29 ເຂົາເຫລົ່ານັ້ນຜ່ານໄປທາງຜ່ານ ເຂົ້າມາແລ້ວເກບາເປັນບ່ອນທີ່ເຂົານອນຄ້າງຄືນ
ເມືອງຣາມາສະທົກສະທ້ານຫວັ່ນໄຫວກິເບອາຂອງຊາອູນໜີໄປແລ້ວ
30 ລູກສາວຂອງກັນລິມເອີຍຈົ່ງສົ່ງສຽງຮ້ອງໂຮ
ໃຫ້ພວກເຂົາໄດ້ຍິນໃນລາຍຊາເຖີດອານາໂທດເອີຍ ໜ້າສົງສານ ແທ້ໆ
31 ຊາວເມືອງມັດເມນາໄດ້ປົບໜີແລ້ວ ຊາວເມືອງເກບິມກຳລັງປົບໜີ
32 ໃນມື້ນີ້ເອງພວກເຂົາຈະຢຸດຢູ່ທີ່ເມືອງໂນບ
ເຂົາຂູ່ເຂັນເຮັດຮ້າຍດ້ວຍມືຕໍ່ສູ້ພູເຂົາຂອງລູກສາວແຫ່ງເມືອງຊີໂອນ,
ໂນນພູຂອງເຢຣູຊາເລັມ
33 ເບິ່ງເຖີດ ອົງພຣະຜູ້ເປັນເຈົ້າພຣະເຈົ້າແຫ່ງຈັກກະວານ
ຈະຕັດກິ່ງໄມ້ດ້ວຍກຳລັງທີ່ໜ້າຢ້ານ ຕົ້ນທີ່ສູງຈະຖືກປ້ຳລົງມາ

ແລະຕົ້ນທີ່ຍິ່ງຈອງຫອງຈະຕ້ອງຕໍ່າລົງ[ກ]

34 ພຣະອົງຈະໃຊ້ຂວານເຫລັກຟັນປ່າທຶບ

ແລະພູເລບານອນຈະລົ້ມລົງໂດຍຄົນມີອໍານາດໃຫຍ່ຫລວງ

# ບົດທີ 11

1 ຈະມີໜໍ່ແຕກອອກມາຈາກຕໍຂອງເຢຊີ

ຈະມີກິ່ງໜຶ່ງປົ່ງອອກມາຈາກຮາກທັງຫລາຍຂອງເພິ່ນ ແລະຈະເກີດໝາກ

2 ແລະພຣະວິນຍານຂອງພຣະຜູ້ເປັນເຈົ້າຈະຢູ່ໃນຜູ້ນັ້ນ

ຄືວິນຍານແຫ່ງປັນຍາ ແລະຄວາມເຂົ້າໃຈ ເປັນວິນຍານແຫ່ງການພິພາກສາ

ແລະລິດເດດ ແມ່ນວິນຍານແຫ່ງຄວາມຮູ້ ແລະການຢໍາເກງພຣະຜູ້ເປັນເຈົ້າ

3 ຄວາມພໍໃຈຂອງເພິ່ນກໍຢູ່ໃນຄວາມຢໍາເກງພຣະຜູ້ເປັນເຈົ້າ

ເພິ່ນຈະບໍ່ພິພາກສາຕາມຕາເພິ່ນເຫັນ ຫລືຕັດສິນຕາມຫູທີ່ເພິ່ນໄດ້ຍິນ

4 ແຕ່ເພິ່ນຈະພິພາກສາຄົນຈົນທັງຫລາຍດ້ວຍຄວາມຊອບທໍາ

ແລະຕັດສິນຕັກເຕືອນຕາມຄວາມທ່ຽງທໍາ

ແກ່ຄົນທັງຫລາຍທີ່ມີໃຈຖ່ອມລົງເທິງແຜ່ນດິນໂລກ

ເພິ່ນຈະຕີແຜ່ນດິນໂລກດ້ວຍໄມ້ແສ້ຈາກປາກຂອງເພິ່ນ

ແລະຈະປະຫານຄົນຊົ່ວດ້ວຍລົມທີ່ອອກມາຈາກສົບປາກຂອງເພິ່ນ

5 ແລະຄວາມຊອບທໍາຈະເປັນສາຍຜ້າມັດແອວທີ່ຄາດແອວຂອງເພິ່ນ

ແລະຄວາມສັດຊື່ຈະເປັນສາຍຮັດຮອບເອິກຂອງເພິ່ນໄວ້

## ບັນດາສັດແຫ່ງໂລກນີ້ຈະຢູ່ເຢັນເປັນສຸກກັບມະນຸດຊາດ

6 ໝາໃນຈະອາໃສຢູ່ນໍາລູກແກະ ແລະເສືອດາວຈະນອນຢູ່ກັບລູກແກະ

ລູກງົວກັບສິງໜຸ່ມກັບສັດອ້ວນພີຈະຢູ່ນໍາກັນ ແລະເດັກນ້ອຍຈະຫລິ້ນນໍາມັນໄດ້

7 ແມ່ງົວກັບໝີໂຕແມ່ຈະກິນຫຍ້ານໍາກັນ

ລູກຂອງມັນກໍຈະນອນຢູ່ນໍາກັນ ແລະສິງຈະກິນເຟືອງຄືງົວຜູ້

8 ເດັກນ້ອຍກິນນົມຈະຫລິ້ນຢູ່ທີ່ຮູງູເຫົ່າ

ແລະເດັກນ້ອຍທີ່ເຊົານົມຈະເອົາມືຈົກຮູຂອງງູຮ້າຍ

9 ສັດເຫລົ່ານັ້ນຈະບໍ່ເຮັດໃຫ້ບາດເຈັບ

ຫລືຈະບໍ່ທໍາລາຍສິ່ງໃດຢູ່ທົ່ວພູເຂົາອັນບໍລິສຸດຂອງເຮົາ

ເພາະວ່າແຜ່ນດິນໂລກຈະເຕັມໄປດ້ວຍຄວາມຮູ້ເລື່ອງຂອງພຣະຜູ້ເປັນເຈົ້າ

ເໝືອນດັ່ງນໍ້າທີ່ຖ້ວມພື້ນທະເລ

## ຄໍາທໍານວຍກ່ຽວກັບການຮວບຮວມກັນອີກຂອງອິສຣາເອນ

10 ໃນມື້ນັ້ນ ຮາກຂອງເຢຊີ ທີ່ຕັ້ງຂຶ້ນເປັນທຸງແກ່ຊົນຊາດທັງຫລາຍຈະເປັນສິ່ງທີ່ສະແຫວງຫາ

---

[ກ] ຄົນທັງຫລາຍທີ່ມີຮູບຮ່າງສູງຈະຈິບຫາຍແລະຄົນທັງຫລາຍທີ່ຍົກຍໍຕົວຂຶ້ນຈະຖືກຕໍ່າລົງ

ຂອງບັນດາ ປະຊາຊາດ ແລະບ່ອນຢູ່ອາໃສຂອງເພິ່ນຈະຮຸ່ງເຮືອງ
11ຢູ່ມາໃນມື້ນັ້ນ ອົງພຣະຜູ້ເປັນເຈົ້າຈະຍື່ນພຣະຫັດຂອງພຣະອົງອອກໄປເທື່ອທີສອງເພື່ອ
ຈະໄດ້ຊັກຊວນຊົນຊາດຂອງພຣະອົງທີ່ເຫລືອຢູ່ກັບຄືນມາເປັນພວກຄົນເຫລືອຈາກອັດຊີເຣຍ
ຈາກເອຢິບ ຈາກປັດໂຣດ ຈາກກູເຊ ຈາກເອລາມ ຈາກຊີນາ (ບາບີໂລນ) ຈາກຮາມັດ
ແລະຈາກເກາະຕ່າງໆແຫ່ງທະເລ

12 ພຣະອົງຈະຍົກທຸງຕໍ່ໜ້າພວກຕ່າງຊາດ
ແລະຊຸມນຸມອິສຣາເອນທີ່ພັດພາກຈາກກັນ
ແລະຮວບຮວມຢູດາທີ່ ກະຈັດກະຈາຍຈາກສີ່ແຈແຫ່ງແຜ່ນດິນໂລກ
13 ຄວາມອິດສາຂອງພວກເອຟຣາຢິມຈະຫາຍໄປ
ແລະບັນດາພວກສັດຕູທີ່ຕໍ່ສູ້ຢູດາຈະຈິບຫາຍໄປ,
ເອຟຣາຢິມຈະບໍ່ອິດສາຢູດາ ແລະຢູດາຈະບໍ່ເປັນສັດຕູຕໍ່ເອຟຣາຢິມ
14 ແຕ່ພວກເຂົາທັງສອງຈະບິນລົງເທິງບ່າໄຫລ່ຂອງຄົນຟີລິດສະຕີນທາງຕາເວັນຕົກ
ແລະພວກເຂົາຈະຮ່ວມກັນປຸ້ນປະຊາຊົນທາງຕາເວັນອອກ,
ພວກເຂົາຈະຢຽດມືອອກຕໍ່ສູ້ເອໂດມກັບໂມອາບ
ແລະຄົນອຳໂມນຈະຟັງ ຄວາມພວກເຂົາ
15 ແລະພຣະຜູ້ເປັນເຈົ້າຈະເຮັດໃຫ້ລີ້ນຂອງທະເລແຫ່ງເອຢິບບົກແຫ້ງ
ແລະພຣະອົງຈະແກວ່ງມືເໜືອແມ່ນ້ຳນັ້ນ ດ້ວຍລົມແດງ
ແລະຈະເຮັດໃຫ້ແມ່ນ້ຳແຍກເປັນຮ່ອງນ້ຳເຈັດສາຍ
ແລະຄົນໃສ່ເກີບຈະຍ່າງຂ້າມໄປໄດ້
16 ແລ້ວຈະມີຖະໜົນຫລວງສຳລັບຄົນທີ່ເຫລືອຢູ່
ຈາກຊົນຊາດຂອງພຣະອົງທີ່ໄດ້ພົ້ນຈາກອັດຊີເຣຍ
ຕາມການທີ່ໄດ້ບັງເກີດຂຶ້ນກັບພວກອິສຣາເອນ
ໃນມື້ທີ່ພວກເຂົາໄດ້ຂຶ້ນມາຈາກແຜ່ນດິນເອຢິບ

# ບົດທີ 12

## ຄົນອິສຣາເອນທຸກຄົນຈະໄດ້ຮັບຄວາມພົ້ນ

1ໃນມື້ນັ້ນເພິ່ນຈະກ່າວວ່າ
"ຂ້າແດ່ພຣະຜູ້ເປັນເຈົ້າຂ້າພະອົງຈະສັນລະເສີນພຣະອົງ
ເພາະວ່າແມ່ນພຣະອົງພຣະພິໂລດຕໍ່ຂ້າພະອົງ
ຄວາມໂກດຮ້າຍຂອງພຣະອົງກໍໄດ້ຫັນໜີກັບໄປ
ແລະພຣະອົງເລົ້າໂລມຂ້າພະອົງ"
2 ເບິ່ງແມພຣະເຈົ້າເປັນຄວາມພົ້ນຂອງຂ້າພະເຈົ້າ
ຂ້າພະເຈົ້າຈະວາງໃຈ ແລະບໍ່ຢ້ານ ເພາະວ່າພຣະຜູ້ເປັນເຈົ້າ

ຄື ພຣະຜູ້ເປັນເຈົ້າ ເປັນກຳລັງ ແລະບົດເພງຂອງຂ້າພະເຈົ້າ
ແລະພຣະອົງເປັນຄວາມພົ້ນຂອງຂ້າພະເຈົ້າແລ້ວ

[3]ເຈົ້າຈະຕັກນ້ຳດ້ວຍຄວາມຍິນດີຈາກບໍ່ນ້ຳແຫ່ງຄວາມພົ້ນ. [4]ແລະໃນມື້ນັ້ນ ພວກເຈົ້າຈະກ່າວ
ວ່າ

"ຈົ່ງສັນລະເສີນ ພຣະຜູ້ເປັນເຈົ້າ ຈົ່ງອ້ອນວອນອອກພຣະນາມຂອງພຣະອົງ
ຈົ່ງປະກາດບັນດາພຣະລາຊະກິດຂອງພຣະອົງທ່າມກາງຊົນຊາດທັງຫລາຍ
ຈົ່ງປ່າວຮ້ອງວ່າພຣະນາມຂອງພຣະອົງເປັນທີ່ຍົກຍໍເທີດທູນສູງສຸດ"
[5] ຈົ່ງຮ້ອງເພງສັນລະເສີນ ພຣະຜູ້ເປັນເຈົ້າ
ເພາະວ່າພຣະອົງກະທຳການອັນອັດສະຈັນທັງຫລາຍ
ໃຫ້ເລື່ອງນີ້ຮູ້ກັນທົ່ວໄປໃນແຜ່ນດິນໂລກ
[6] ຊາວຊີໂອນ ເອີຍ ຈົ່ງໂຫ່ຮ້ອງຍິນດີ ແລະຮ້ອງສຽງດັງດ້ວຍຄວາມຊົມຊື່ນຍິນດີ
ເພາະວ່າອົງບໍລິສຸດແຫ່ງ ອິສຣາເອນ ນັ້ນ ກໍຍິ່ງໃຫຍ່ທີ່ສຸດໃນໝູ່ພວກເຈົ້າ

# ບົດທີ 13

## ການທຳລາຍເມືອງບາບີໂລນ ແລະສັດຕູຂອງພຣະເຈົ້າ

[1]ພຣະໂອວາດກ່ຽວກັບ ບາບີໂລນ ຕາມທີ່ ເອຊາຢາ ລູກຊາຍຂອງ ອາໂມດ ໄດ້ເຫັນ
[2] ຈົ່ງຍົກທຸງສັນຍາຂຶ້ນເທິງພູເຂົາສູງ ຈົ່ງຮ້ອງເອີ້ນພວກເຂົາທັງຫລາຍ
ຈົ່ງກວັກມືໃຫ້ພວກເຂົາເຂົ້າໄປໃນປະຕູເມືອງຂອງຂຸນນາງ
[3] ຕົວເຮົາເອງໄດ້ສັ່ງແກ່ຜູ້ບໍລິສຸດຂອງເຮົາແລ້ວ
ເຮົາໄດ້ເອີ້ນຊາຍໜຸ່ມຂອງເຮົາໃຫ້ຈັດການຕາມຄວາມຄຽດຮ້າຍຂອງເຮົາ
ຄືຜູ້ທີ່ຍິນດີໃນຄວາມສູງສົ່ງຂອງເຮົາ
[4] ສຽງປາກຂອງຝູງຄົນຢູ່ເທິງພູເຂົາເໝືອນດັ່ງສຽງຂອງຊາວປະເທດໃຫຍ່
ສຽງອຶກກະທຶກຂອງລາຊາອານາຈັກ
ທັງຫລາຍຂອງບັນດາປະຊາຊາດທີ່ຮ່ວມເຂົ້ານຳກັນ
ພຣະຜູ້ເປັນເຈົ້າ ແຫ່ງຈັກກະວານກຳລັງລະດົມພົນເພື່ອສູ້ຮົບ
[5] ພວກເຂົາມາຈາກແຜ່ນດິນທີ່ແສນໄກ ຈາກສຸດປາຍຟ້າສະຫວັນ
ພຣະຜູ້ເປັນເຈົ້າ ແລະອາວຸດແຫ່ງພຣະພິໂລດ ຂອງພຣະອົງ
ເພື່ອຈະທຳລາຍແຜ່ນດິນນີ້ທັງໝົດ
[6] ຈົ່ງຮ້ອງຄວນຄາງດັງໆ ເພາະວ່າວັນຂອງ ພຣະຜູ້ເປັນເຈົ້າ ມາໃກ້ແລ້ວ
ມື້ນັ້ນຈະມາ ເປັນການທຳລາຍຈາກພຣະອົງ ຜູ້ມີລິດອຳນາດ
[7] ເຫດສະນັ້ນ ທຸກໆມືກໍຈະອ່ອນເພຍ
ແລະຈິດໃຈຂອງທຸກຄົນກໍຈະລະລາຍໄປ
[8] ແລະພວກເຂົາທັງຫລາຍຈະຕົກໃຈຢ້ານ

ຄວາມເຈັບແລະຄວາມປວດຈະເກາະພວກເຂົາ
ພວກເຂົາຈະທໍລະມານເໝືອນດັ່ງຜູ້ຍິງທີ່ກຳລັງຈະເກີດລູກ
ພວກເຂົາຈະເບິ່ງຕາກັນຢ່າງຕົກຕະລຶງ ໜ້າຂອງພວກເຂົາແດງເປັນແສງໄຟ
9 ເບິ່ງແມ ມື້ແຫ່ງພຣະຜູ້ເປັນເຈົ້າຈະມາຢ່າງໂຫດຮ້າຍດ້ວຍພຣະພິໂລດ
ແລະຄວາມຄຽດອັນໂຫດຮ້າຍ ທີ່ຈະເຮັດໃຫ້ແຜ່ນດິນເປັນບ່ອນຮ້າງເປົ່າ
ແລະພຣະອົງຈະທຳລາຍຄົນບາບຂອງໂລກຈາກແຜ່ນດິນ
10 ເພາະວ່າດວງດາວແຫ່ງຟ້າສະຫວັນ ແລະໝູ່ດາວໃນບ່ອນນັ້ນ
ຈະບໍ່ສົ່ງແສງຂອງມັນ ຕາເວັນກໍຈະມືດເມື່ອເວລາມັນຂຶ້ນ
ແລະດວງເດືອນຈະບໍ່ສ່ອງແສງຂອງມັນ
11 ເຮົາຈະລົງໂທດແກ່ມະນຸດສະໂລກຍ້ອນຄວາມຊົ່ວຮ້າຍຂອງພວກເຂົາ
ແລະຄົນຊົ່ວທັງຫລາຍ ຍ້ອນຄວາມຊົ່ວຊ້າຂອງພວກເຂົາ
ເຮົາຈະເຮັດໃຫ້ຄວາມຈອງຫອງຂອງຄົນຈອງຫອງສິ້ນສຸດລົງ
ແລະປາບຄວາມຈອງຫອງຂອງຄົນໂຫດຮ້າຍ

## ສະໄໝແຫ່ງຄວາມທຸກລຳບາກອັນໃຫຍ່ ແລະຄົນອິສຣາເອນທີ່ເຫລືອຢູ່

12 ເຮົາຈະເຮັດໃຫ້ຄົນມີຄ່າຫລາຍກວ່າຄຳບໍລິສຸດ
ແລະມະນຸດມີຄ່າຫລາຍກວ່າຄຳແຫ່ງໂອຟີ
13 ເຫດສະນັ້ນ ເຮົາຈະເຮັດໃຫ້ຟ້າສະຫວັນສັ່ນສະເທືອນ
ແລະແຜ່ນດິນໂລກຈະສະທ້ານພັດຈາກບ່ອນຂອງມັນ
ໂດຍພຣະພິໂລດຂອງພຣະຜູ້ເປັນເຈົ້າແຫ່ງຈັກກະວານ
ໃນມື້ແຫ່ງຄວາມຄຽດອັນຮ້າຍແຮງຂອງພຣະອົງ
14 ຄົນທຸກຄົນຈະຫັນເຂົ້າສູ່ຊົນຊາດຂອງຕົນເອງ
ແລະຄົນທຸກຄົນຈະໜີໄປຍັງແຜ່ນດິນຂອງຕົນເອງດັ່ງຕົວເຍືອງທີ່ຖືກລ່າ
ຫລືແກະທີ່ບໍ່ມີຜູ້ລວມຝູງ
15 ທຸກຄົນທີ່ພວກເຂົາພົບກໍຈະຖືກແທງຈົນຊອດ
ແລະທຸກຄົນທີ່ລວມເຂົ້ານຳກັນກັບພວກເຂົາກໍຈະລົ້ມລົງດ້ວຍດາບ
16 ລູກນ້ອຍຂອງພວກເຂົາຈະຖືກຟາດລົງເປັນຕ່ອນໆຕໍ່ໜ້າຕໍ່ຕາພວກເຂົາ
ເຮືອນຂອງພວກເຂົາຈະຖືກປຸ້ນ ແລະເມຍຂອງພວກເຂົາຈະຖືກຂົ່ມຂືນ

## ການທຳລາຍນະຄອນບາບີໂລນ

17 ເບິ່ງແມ ເຮົາຈະຍົວະໃຫ້ຊາວເມເດຍລຸກຂຶ້ນຕໍ່ສູ້ພວກເຂົາ
ຜູ້ຊຶ່ງບໍ່ເອົາໃຈໃສ່ໃນເລື່ອງເງິນ ແລະບໍ່ຫ່ວງໄຍໃນເລື່ອງຄຳ
18 ຄັນທະນູຂອງພວກເຂົາຈະຟາດຊາຍໜຸ່ມລົງເປັນຕ່ອນໆ
ພວກເຂົາຈະບໍ່ປານີຕໍ່ລູກທີ່ຢູ່ໃນທ້ອງແມ່

ໃນຕາຂອງພວກເຂົາຈະບໍ່ສົງສານເດັກນ້ອຍ
19 ບາບີໂລນຊຶ່ງເປັນເມືອງປະດັບທີ່ງົດງາມ
ແລະເປັນກຽດຕິຍົດຂອງບັນດາລາຊາອານາຈັກທັງຫລາຍຂອງຊາວຄັນເດອາ
ຈະເປັນເໝືອນດັ່ງເມືອງໂຊໂດມ ແລະເມືອງໂກໂມຣາ ເມື່ອພຣະເຈົ້າຂວ້ຳມັນເສຍ
20 ຈະບໍ່ມີໃຜເຂົ້າໄປຢູ່ໃນບາບີໂລນຈັກເທື່ອ
ແລະຈະບໍ່ມີໃຜອາໄສຢູ່ບ່ອນນັ້ນຕັ້ງແຕ່ຊົ່ວອາຍຸນີ້ສືບໆໄປຫາຊົ່ວອາຍຸໜ້າ,
ຄົນອາຫລັບຈະບໍ່ກາງເຕັນຂອງພວກເຂົາຢູ່ບ່ອນນັ້ນ
ແລະພວກລ້ຽງແກະທີ່ຈະບໍ່ໃຫ້ແກະຂອງພວກເຂົານອນລົງຢູ່ບ່ອນນັ້ນ
21 ແຕ່ສັດປ່າຈະນອນລົງຢູ່ບ່ອນນັ້ນ ແລະບ້ານເຮືອນໃນບ່ອນນັ້ນ
ຈະເຕັມໄປດ້ວຍນົກກະຈອກເທດ ນົກເຄົ້າແມວຈະອາໃສຢູ່
ແລະແບ້ປ່າຈະເຕັ້ນລຳຢູ່ບ່ອນນັ້ນ
22 ໝາໄນຈະເຫົ່າຫອນໃສ່ກັນແລະກັນຢູ່ໃນຜາສາດຂອງເມືອງນັ້ນ
ແລະໝາປ່າຈະຢູ່ໃນວັງທີ່ງົດງາມແລະເວລາກຳນົດຂອງເມືອງນັ້ນກໍໃກ້ເຂົ້າມາແລ້ວ
ວັນເວລາຂອງມັນຈະບໍ່ຍືດໃຫ້ຍາວໄປອີກ

# ບົດທີ 14

## ການຮວບຮວມຄົນອິສຣາເອນໃນອະນາຄົດ

1ເພາະວ່າພຣະຜູ້ເປັນເຈົ້າຈະມີພຣະເມດຕາຕໍ່ຢາໂຄບ ແລະຈະເລືອກອິສຣາເອນອີກ ແລະ
ຈະຕັ້ງພວກເຂົາໃຫ້ມີຄວາມສຸກໃນແຜ່ນດິນຂອງພວກເຂົາເອງ ຄົນຕ່າງດ້າວຈະເຂົ້າສ່ວນກັບ
ພວກເຂົາ ແລະຈະຕິດພັນຢູ່ກັບເຊື້ອສາຍຂອງຢາໂຄບ
2ຊົນຊາດທັງຫລາຍຈະຮັບພວກເຂົາ
ແລະນຳເອົາພວກເຂົາໄປໃນບ່ອນຢູ່ຂອງພວກເຂົາ ແລະເຊື້ອສາຍ ຂອງອິສຣາເອນຈະມີສິດໃນ
ພວກເຂົາ ໂດຍເປັນຂ້າທາດຊາຍຍິງໃນແຜ່ນດິນຂອງພຣະຜູ້ເປັນເຈົ້າ ຄົນທັງຫລາຍທີ່ຈັບພວກ
ເຂົາໄປເປັນຊະເລີຍ ຈະຖືກພວກເຂົາຈັບເປັນຊະເລີຍ ແລະຈະປົກຄອງຜູ້ທີ່ເຄີຍບີບບັງຄັບພວກ
ເຂົາ

3ແລະຕໍ່ມາໃນມື້ທີ່ພຣະຜູ້ເປັນເຈົ້າຈະປະທານໃຫ້ພວກເຈົ້າໄດ້ຢຸດພັກຈາກຄວາມເສົ້າໂສກ
ເສຍໃຈຂອງພວກ ເຈົ້າ ແລະຈາກຄວາມຢ້ານ ຈາກງານອັນໜັກ ຊຶ່ງພວກເຈົ້າຖືກບັງຄັບໃຫ້
ເຮັດ
4ເຈົ້າຈະຍົກຄຳສຸພາສິດນີ້ກ່າວຕໍ່ກະສັດແຫ່ງບາບີໂລນວ່າ "ຜູ້ບີບບັງຄັບກໍສະຫງົບໄປ
ແລ້ວນໍ ເມືອງທີ່ຖືກຂົ່ມເຫັງກໍສະຫງົບໄປເໝືອນກັນ
5ພຣະຜູ້ເປັນເຈົ້າຫັກໄມ້ຄ້ອນຂອງຄົນຊົ່ວ
ຮ້າຍ ແລະ ຄະທາຂອງຜູ້ປົກຄອງ
6ຜູ້ຊຶ່ງໂຈມຕີປະຊາຊົນດ້ວຍຄວາມຄຽດຮ້າຍ ດ້ວຍການ
ໂຈມຕີຢ່າງບໍ່ຢຸດຢັ້ງ ລາວປົກຄອງປະຊາຊາດດ້ວຍ ຄວາມໂກດຮ້າຍ ດ້ວຍການຂົ່ມເຫັງໂດຍບໍ່
ມີຜູ້ໃດຍັບຍັ້ງໄດ້

## ຄວາມສະຫງົບສຸກທົ່ວໂລກ

7ແຜ່ນດິນໂລກທັງໝົດກໍພັກ ແລະສະຫງົບຢູ່ ພວກເຂົາທັງຫລາຍຮ້ອງເພງອອກມາ
8ຕົ້ນສົນ

ຊົມຊື່ນຍິນດີຍ້ອນເຈົ້າ ຕົ້ນແປກແຫ່ງເລບານອນກໍເໝືອນກັນ ແລະກ່າວວ່າ 'ຕັ້ງແຕ່ເຈົ້າຕົກຕໍ່າ
ກໍບໍ່ມີຜູ້ປ້ຳຂຶ້ນມາຕໍ່ສູ້ເຮົາແລ້ວ'ສັດຕູຂອງພຣະເຈົ້າຖືກຖິ້ມລົງໃນບຶງໄຟ
9ນາລົກເບື້ອງລຸ່ມກໍຕື່ນເຕັ້ນ ເພື່ອຕ້ອນຮັບເຈົ້າເມື່ອເຈົ້າມາ ມັນປຸກໃຫ້ຊາວແດນຄົນຕາຍມາ
ຕ້ອນຮັບເຈົ້າ ຄືບັນດາຜູ້ຊຶ່ງເຄີຍເປັນຜູ້ນຳຂອງໂລກ ມັນເຮັດໃຫ້ບັນດາຜູ້ທີ່ເຄີຍເປັນກະສັດແຫ່ງ
ປະຊາຊາດທັງຫລາຍລຸກຂຶ້ນມາ ຈາກພະທີ່ນັ່ງຂອງພວກເຂົາ 10ທຸກຄົນຈະເວົ້າ ແລະກ່າວແກ່
ເຈົ້າວ່າ 'ເຈົ້າກໍອ່ອນເພຍເໝືອນກັບເຮົາຄືກັນບໍ ເຈົ້າກາຍເປັນຄືກັບ ພວກເຮົາແລ້ວບໍ?'
11ຄວາມໂອ້ອວດຂອງເຈົ້າຖືກນຳລົງມາເຖິງແດນຄົນຕາຍພ້ອມທັງສຽງພິນໃຫຍ່ຂອງເຈົ້າ ໂຕ
ໜອນຈະເປັນບ່ອນນອນ ຊຶ່ງຢູ່ກ້ອງຕົວເຈົ້າ ແລະຕົວໜອນຈະເປັນຜ້າຫົ່ມຂອງເຈົ້າ

## ການລົ້ມລົງຂອງຜີມານຊາຕານ

12ໂອ ດວງແຈ້ງໜ່ວຍທີ່ຮຸ່ງເຮືອງເອີຍ ເຈົ້າໄດ້ຕົກລົງມາຈາກຟ້າສະຫວັນຢ່າງໃດ ເຈົ້າຖືກ
ຕັດລົງມາຍັງພື້ນດິນຢ່າງໃດນໍ ເຈົ້າຜູ້ເຮັດໃຫ້ບັນດາປະຊາຊາດຕົກຕໍ່າ 13ເຈົ້າຄິດໃນໃຈຂອງເຈົ້າ
ວ່າ 'ຂ້ອຍຈະຂຶ້ນໄປຟ້າສະຫວັນ ຂ້ອຍຈະຕັ້ງທີ່ນັ່ງຂອງຂ້ອຍເທິງດວງດາວທັງຫລາຍຂອງ
ພຣະເຈົ້າ ຂ້ອຍຈະນັ່ງເທິງພູເຂົາແຫ່ງຊຸມນຸມໃນບ່ອນສຸດທາງດ້ານທິດເໜືອ 14ຂ້ອຍຈະຂຶ້ນໄປ
ເທິງບ່ອນສູງຂອງເມກ ຂ້ອຍຈະເຮັດໃຫ້ຕົວຂອງຂ້ອຍສະເໝີກັບອົງພຣະຜູ້ເປັນເຈົ້າຜູ້ສູງສຸດ ຄື
ອົງຜູ້ສູງສຸດ' 15ແຕ່ເຈົ້າຈະຖືກນຳລົງມາສູ່ນາລົກຊຶ່ງເປັນບ່ອນເລິກຂອງໂກນເລິກ
16ບັນດາຜູ້ທີ່ເຫັນເຈົ້າຈະປັກຕາເບິ່ງເຈົ້າ ແລະພວກເຂົາຈະພິຈາລະນາເບິ່ງເຈົ້າວ່າ 'ຊາຍຄົນ
ນີ້ບໍທີ່ເຮັດໃຫ້ໂລກສັ່ນສະເທືອນ ຜູ້ທີ່ສັ່ນຄອນລາຊາອານາຈັກທັງຫລາຍ 17ຜູ້ທີ່ໄດ້ເຮັດໃຫ້ໂລກ
ເປັນເໝືອນກັບຖິ່ນແຫ້ງແລ້ງກັນດານ ແລະຂວ້ຳບັນດາຫົວເມືອງຂອງໂລກ, ຜູ້ບໍ່ຍອມໃຫ້ຊະ-
ເລີຍກັບໄປບ້ານຂອງພວກເຂົາ'

## ການລົ້ມລົງຂອງບາບີໂລນກັບອານາຈັກຂອງອັດຊີເຣຍ

18ກະສັດທັງໝົດຂອງບັນດາປະຊາຊາດນອນຢູ່ຢ່າງມີກຽດ ທຸກຄົນຕ່າງກໍຢູ່ໃນເຮືອນຂອງຕົນ
ເອງ 19ແຕ່ຝ່າຍເຈົ້າຖືກຖິ້ມອອກໄປໃຫ້ຫ່າງຈາກຂຸມຝັງສົບຂອງເຈົ້າ ຄ້າຍຄືກິ່ງໄມ້ກິ່ງໜຶ່ງທີ່ໜ້າ
ກຽດຊັງ, ຄືຊາກສົບທີ່ຖືກຂ້າແລ້ວດ້ວຍດາບເໝືອນກັບສວມເສື້ອຂອງຜູ້ທີ່ຖືກຂ້າແລ້ວ, ຄືຖືກ
ແທງດ້ວຍດາບ ແລະຖິ້ມລົງໄປເທິງຫີນໃນ ຂຸມສົບ ເປັນຊາກສົບທີ່ຖືກຢຽບຢ່ຳ 20ເຈົ້າຈະບໍ່ໄດ້
ຮັບການຝັງສົບຮ່ວມກັບພວກເຂົາ ເພາະວ່າເຈົ້າໄດ້ທຳລາຍແຜ່ນດິນຂອງເຈົ້າ ເຈົ້າໄດ້ສັງຫານ
ປະຊາຊົນຂອງເຈົ້າ 'ຂໍຢ່າໃຫ້ຜູ້ໃດເອີ່ຍເຖິງຊື່ຂອງເຊື້ອສາຍຂອງຜູ້ກະທຳຄວາມຊົ່ວອີກເລີຍ
21ຈົ່ງຕຽມສັງຫານລູກຫລານຂອງລາວ ຍ້ອນກຳທີ່ຊົ່ວຊ້າແຫ່ງພໍ່ຂອງລາວ ຢ້ານວ່າພວກເຂົາ
ທັງຫລາຍຈະລຸກຂຶ້ນເປັນເຈົ້າຂອງແຜ່ນດິນໂລກ ແລະເຮັດໃຫ້ພື້ນໂລກເຕັມໄປໃນຫົວເມືອງ
ຕ່າງໆ
22ພຣະຜູ້ເປັນເຈົ້າແຫ່ງຈັກກະວານກ່າວວ່າ "ເຮົາຈະລຸກຂຶ້ນສູ້ກັບພວກເຂົາ ແລະຈະຕັດຊື່
ພ້ອມກັບຄົນທີ່ເຫລືອຢູ່ ຕັດລູກຫລານ ແລະຍາດພີ່ນ້ອງອອກຈາກບາບີໂລນ" ພຣະຜູ້ເປັນເຈົ້າ
ກ່າວດັ່ງນີ້ແຫລະ 23"ແລະເຮົາຈະເຮັດໃຫ້ເມືອງນັ້ນເປັນບ່ອນຢູ່ຂອງຝູງນົກຍາງ, ເປັນບຶງ ແລະ
ຈະກວາດມັນດ້ວຍໄມ້ກວາດແຫ່ງຄວາມຈິບຫາຍ" ພຣະຜູ້ເປັນເຈົ້າແຫ່ງຈັກກະວານກ່າວດັ່ງນີ້

ແຫລະ
[24]ພຣະຜູ້ເປັນເຈົ້າ ແຫ່ງຈັກກະວານໄດ້ປະຕິຍານວ່າ "ຈິງແທ້ ເຮົາໄດ້ຄິດທີ່ຈະກະທຳຢ່າງນັ້ນ
ກໍຈະບັງເກີດຂຶ້ນມາ ແລະເຮົາໄດ້ມີຈຸດປະສົງໄວ້ຢ່າງໃດ ກໍຈະເກີດຂຶ້ນແນວນັ້ນ [25]ເຮົາຈະໂຈມ
ຕີຄົນ ອັດຊີເຣຍ ໃນແຜ່ນດິນຂອງເຮົາໃຫ້ແຕກໄປ ແລະເຮົາຈະຢຽບຢໍ່າລາວເທິງພູທັງຫລາຍຂອງ
ເຮົາ ແລະແອກຂອງລາວຈະປົດອອກຈາກພວກເຂົາແລະພາລະຂອງລາວຈາກບ່າຂອງພວກ
ເຂົາ" [26]ນີ້ເປັນຄວາມມຸ້ງໝາຍທີ່ໄດ້ຕັ້ງໄວ້ກ່ຽວກັບແຜ່ນດິນໂລກທັງໝົດ ແລະນີ້ເປັນມື ຊຶ່ງຢຽດ
ອອກເໜືອບັນດາປະຊາຊາດທັງໝົດ [27]ເພາະວ່າ ພຣະຜູ້ເປັນເຈົ້າ ແຫ່ງຈັກກະວານໄດ້ໝາຍໄວ້
ແລ້ວວ່າ ຜູ້ໃດຈະລົບລ້າງໄດ້ ແລະຖ້າມືຂອງພຣະອົງ ຢຽດອອກແລ້ວ ຈະບໍ່ມີຜູ້ໃດຫັນໃຫ້ກັບ
ຄືນໄດ້

## ການບີບບັງຄັບ ແລະບັນຫາຕ່າງໆ ທີ່ຈະມາເຖິງອິສຣາເອນ

[28]ໃນປີທີ່ກະສັດ ອາຮາດ ເສຍຊີວິດ ຄຳໂອວາດນີ້ໄດ້ປະກາດອອກໄປວ່າ

[29] "ປະເທດ ຟີລິດສະເຕຍ ເອີຍ ຢ່າຊົມຊື່ນຍິນດີຍ້ອນໄມ້ແສ້
ຊຶ່ງຕີເຈົ້ານັ້ນໄດ້ຫັກແລ້ວ
ເພາະວ່າງູຮ້າຍໂຕໜຶ່ງຈະອອກມາຈາກຮາກເຫງົ້າຂອງມັນ
ແລະລູກຂອງມັນຈະເປັນງູໄຟທີ່ບິນໄປໄດ້
[30] ລູກກົກຂອງຄົນທຸກຍາກຈະມີອາຫານກິນ ແລະຄົນຂັດສົນຈະນອນລົງຢ່າງປອດໄພ
ແຕ່ຮາກເຫງົ້າຂອງເຈົ້າເຮົາຈະໃຫ້ຕາຍດ້ວຍການອຶດຫິວ
ແລະຄົນທີ່ເຫລືອຢູ່ຂອງເຈົ້າຈະຖືກສັງຫານ
[31] ໂອ ປະຕູເມືອງເອີຍ ຈົ່ງຮ້ອງໄຫ້ດ້ວຍສຽງອັນດັງ ຫົວເມືອງເອີຍ
ຈົ່ງຮ້ອງໄຫ້ ທົ່ວປະເທດ ຟີລິດສະເຕຍ ເອີຍ
ເຈົ້າທຸກຄົນຈົ່ງເປື່ອຍໄປເຖີ້ນ ເພາະວ່າຄວັນໄຟຈະອອກມາຈາກທິດເໜືອ
ແລະຈະບໍ່ມີຜູ້ໃດເລີກຈາກການຮ່ວມໃນບັນດາກອງທັບຂອງພວກເຂົາເລີຍ"
[32] ພວກເຂົາຈະຕອບທູດຂອງປະຊາຊາດນັ້ນວ່າຢ່າງໃດ
ກໍຕອບວ່າ "ພຣະຜູ້ເປັນເຈົ້າ ໄດ້ສະຖາປະນາເມືອງຊີໂອນໄວ້
ແລະຄົນທຸກຍາກໃນຊົນຊາດຂອງພຣະອົງກໍຈະພົບທີ່ເພິ່ງໃນບ່ອນນັ້ນ"

# ບົດທີ 15

## ພຣະໂອວາດກ່ຽວກັບໂມອາບ

[1]ພຣະໂອວາດກ່ຽວກັບ ໂມອາບ:
ເພາະວ່າເມືອງ ອາຣະ ແຫ່ງ ໂມອາບ ຖືກທຳລາຍລ້າງໃນຄືນດຽວ
ແລະໄດ້ຈິບຫາຍໄປແລ້ວ
ເພາະວ່າເມືອງ ກີເຣ ແຫ່ງ ໂມອາບ ຖືກທຳລາຍລ້າງໃນຄືນດຽວ
ແລະໄດ້ຈິບຫາຍໄປ

2 ພວກເຂົາໄດ້ຂຶ້ນໄປທີ່ບາຍິດ ແລະ ດີໂບນ ໄປຍັງປູຊະນີຍະສະຖານສູງ
ເພື່ອຈະຮ້ອງໄຫ້ໂມອາບ ຈະຄໍ່າຄວນເຖິງ ເນໂບ
ແລະເຖິງ ເມເດບາຫົວທຸກຫົວກໍຈະໂລ້ນ
ແລະໜວດເຄົາທຸກຄົນກໍຈະຖືກແຖ
3 ຢູ່ໃນຖະໜົນຂອງເມືອງນັ້ນ ພວກເຂົາຈະຄາດຜ້າກະສອບ
ທຸກຄົນຈະຮ້ອງໄຫ້ຢູ່ຫລັງຄາເຮືອນ ແລະຕາມຖະໜົນ
4 ເມືອງ ເຮັດຊະໂບນ ແລະ ເອເລອາເລ ຈະສົ່ງສຽງຮ້ອງອັນດັງ
ສຽງນັ້ນຈະໄດ້ຍິນໄປເຖິງເມືອງຢາຮາດ
ເພາະສະນັ້ນ ຜູ້ຊາຍຂອງໂມອາບທີ່ຖືອາວຸດທຸກຄົນຈຶ່ງຈະຮ້ອງສຽງດັງ
ຊີວິດຂອງລາວກໍວຸ້ນວາຍໃນຕົວເອງ
5 ຈິດໃຈຂອງຂ້າພະເຈົ້າຈະຮ້ອງອອກມາເພື່ອໂມອາບ
ຜູ້ທີ່ຫລົບໄພຂອງໂມອາບນັ້ນ ຈະໜີໄປທີ່ໂຊອາ
ເໝືອນກັບງົວໜຸ່ມທີ່ມີອາຍຸສາມປີ ເພາະວ່າຕາມທາງຂຶ້ນໄປເມືອງລູຮິດ
ພວກເຂົາຈະຂຶ້ນໄປດ້ວຍການຄໍ່າຄວນຕາມຫົນທາງ ໄປສູ່ເມືອງໂຮໂຣນາຢິມ
ພວກເຂົາຈະເປັ່ງສຽງຮ້ອງເຖິງການທຳລາຍ
6 ເພາະວ່າຫ້ວຍນໍ້າຢູ່ນິມຣີມກໍຈະຖືກປະຖິ້ມ
ຫຍ້າກໍຫ່ຽວແຫ້ງໄປ ແລະຫຍ້າອ່ອນກໍບໍ່ປົ່ງຂຶ້ນ ຜັກສົດກໍບໍ່ມີເລີຍ
7 ເຫດສະນັ້ນ ຊັບສິນຊຶ່ງພວກເຂົາເກັບມາໄດ້ ແລະພວກເຂົາສະສົມໄວ້
ພວກເຂົາຈະຂົນເອົາໄປຂ້າມຫ້ວຍຕົ້ນໄຄ້
8 ເພາະວ່າສຽງຮ້ອງໄດ້ກະຈາຍໄປທົ່ວຊາຍແດນໂມອາບ
ສຽງຄໍ່າຄວນໄປຮອດເອັກລາຢິມສຽງຄໍ່າຄວນໄປເຖິງ ເບເອ-ເອລີມ
9 ເພາະວ່ານໍ້າຂອງເມືອງດີໂບນຈະມີເລືອດເຕັມໄປໝົດ
ເຖິງປານນັ້ນ ເຮົາຍັງຈະເພີ່ມເຕີມໄພພິບັດ ແກ່ດີໂບນອີກ
ຄືໃຫ້ສິງໃຫຍ່ສຳລັບຊາວໂມອາບທີ່ປົບໜີໄປ ແລະສຳລັບຄົນທີ່ເຫລືອຢູ່ໃນແຜ່ນດິນ

# ບົດທີ 16

## ລູກສາວຂອງໂມອາບຄອຍຖ້າອານາຈັກຂອງພຣະເຈົ້າ

1 ເຈົ້າຈົ່ງສົ່ງລູກແກະໄປຍັງຜູ້ປົກຄອງແຜ່ນດິນ
ຈາກ ເຊລາຕາມທາງຖິ່ນແຫ້ງແລ້ງກັນດານໄປຍັງພູເຂົາຂອງລູກສາວຊີໂອນ
2 ເໝືອນນົກທີ່ກຳລັງບິນໜີ ເໝືອນລູກນົກທີ່ຖືກໄລ່ໜີຈາກຮັງ
ລູກສາວຂອງໂມອາບຈະເປັນແນວນັ້ນ ຊຶ່ງຄອຍຖ້າຈະລຸຍຂ້າມແມ່ນໍ້າອາໂນນ
3 "ຈົ່ງໃຫ້ຄຳປຶກສາ ຈົ່ງເຮັດການຊອບທຳ
ຈົ່ງໃຫ້ຮົ່ມເງົາຂອງທ່ານເປັນຄືກາງຄືນໃນຕອນກາງເວັນ,

ຈົ່ງຊ່ວຍເຊື່ອງຜູ້ຖືກຂັບໄລ່ ຢ່າທັກທາຍຫລັງຜູ້ທີ່ລີ້ໄພ
4 ໂມອາບ ເອີຍ ຈົ່ງໃຫ້ຜູ້ຖືກຂັບໄລ່ຂອງເຮົາອາໄສຢູ່ນຳພວກທ່ານ
ຈົ່ງເປັນບ່ອນລີ້ໄພແກ່ພວກເຂົາໃຫ້ພົ້ນຈາກໜ້າຂອງຜູ້ທຳລາຍ
ເພາະວ່າຜູ້ບີບບັງຄັບໄດ້ໝົດສິ້ນແລ້ວ ຜູ້ທຳລາຍໄດ້ຢຸດຢັ້ງແລ້ວ
ແລະຜູ້ຢຽບຢ່ຳໄດ້ຖືກດັບສູນໄປຈາກແຜ່ນດິນແລ້ວ
5 ພະທີ່ນັ່ງບ່ອນໜຶ່ງຈະຕັ້ງໝັ້ນຄົງຢູ່ດ້ວຍຄວາມເມດຕາ
ຢູ່ເທິງນັ້ນຈະມີຜູ້ໜຶ່ງນັ່ງຢູ່ດ້ວຍຄວາມຈິງໃນເຕັນຂອງ ດາວິດ
ຄືທ່ານຜູ້ນັ້ນຈະພິພາກສາ ແລະສະແຫວງຫາຄວາມຍຸດຕິທຳ
ແລະວ່ອງໄວໃນການກະທຳຄວາມຊອບທຳ”

## ການທຳລາຍຄວາມຈອງຫອງຂອງໂມອາບ

6 ເຮົາໄດ້ຍິນເຖິງຄວາມຈອງຫອງຂອງ ໂມອາບ ຜູ້ມີໃຈຈອງຫອງຫລາຍ
ແລະຄວາມອວດອົ່ງຂອງລາວ ຄວາມຈອງຫອງຂອງລາວ
ຄວາມຄຽດຮ້າຍຂອງລາວ ມີແຕ່ຄຳຕົວະຂອງລາວ ຊຶ່ງຈະບໍ່ສຳເລັດ
7 ເຫດສະນັ້ນໂມອາບ ຈະຄໍ່າຄວນເພື່ອ ໂມອາບ ທຸກຄົນຈະຄໍ່າຄວນ
ພວກເຈົ້າຈະຮ້ອງຄາງຍ້ອນຮາກຖານຂອງເມືອງ ກີເຣ-ຮາເຣເສັດ
ເພາະວ່າມັນຈະຖືກທຸບໃຫ້ມຸ່ນຢ່າງແນ່ນອນ
8 ເພາະວ່າທົ່ງນາແຫ່ງເມືອງ ເຮັດຊະໂບນ ຈະຫ່ຽວແຫ້ງໄປ
ພ້ອມທັງເຄືອອະງຸ່ນຂອງ ສິບມາ ເຈົ້ານາຍທັງຫລາຍ
ແຫ່ງບັນດາປະຊາຊາດໄດ້ທຳລາຍມັນລົງຈົນໄປເຖິງເມືອງ ຢາເຊ
ແລະພະເນຈອນໄປເຖິງຖິ່ນແຫ້ງແລ້ງກັນດານ
ໜໍ່ຂອງມັນກໍແຕກກວ້າງອອກ ແລະຜ່ານຂ້າມທະເລໄປ
9 ເຫດສະນັ້ນ ເຮົາຈຶ່ງຮ້ອງໄຫ້ກັບຄົນທີ່ຮ້ອງໄຫ້ຂອງເມືອງ ຢາເຊ
ຍ້ອນເຄືອອະງຸ່ນຂອງ ສິບມາ ເຮັດຊະໂບນ ແລະເອເລອາເລ ເອີຍ
ເຮົາຈະຫົດພວກເຈົ້າດ້ວຍນໍ້າຕາຂອງເຮົາ ເພາະວ່າສຽງຮ້ອງໄດ້ມາຖືກຜົນ
ແລະເຂົ້າທີ່ເກັບກ່ຽວຂອງເຈົ້າ ກໍໄດ້ສະຫງົບລົງແລ້ວ
10 ຄວາມຊື່ນບານ ແລະຄວາມຍິນດີໄດ້ຫາຍໄປຈາກສວນໝາກໄມ້ອັນດົກໜາ
ແລະພວກເຂົາບໍ່ໄດ້ຮ້ອງເພງ ຕອບກັນ ຫລືໂຫ່ຮ້ອງຍິນດີຕາມສວນອະງຸ່ນ
ບໍ່ມີໃຜໂຫ່ຮ້ອງຕາມບ່ອນບີບເອົານໍ້າອະງຸ່ນ ແລະບໍ່ມີຄົນໃດບີບເອົານໍ້າອະງຸ່ນອີກຕໍ່ໄປ,
ເຮົາໄດ້ເຮັດໃຫ້ສຽງໂຫ່ຮ້ອງຈາກການຢຽບອະງຸ່ນງຽບລົງແລ້ວ
11 ສະນັ້ນ ຈິດຂອງຂ້າພະເຈົ້າຈຶ່ງຈະຮ້ອງໄຫ້ເໝືອນດັ່ງພິນຄູ່ເພື່ອ ໂມອາບ
ແລະໃຈຂອງຂ້າພະເຈົ້າຮ້ອງໄຫ້ເພື່ອ ກີເຣ-ຮາເຣເສັດ
12 ຢູ່ຕໍ່ມາເມື່ອເຫັນວ່າ ໂມອາບ ອິດເມື່ອຍຢູ່ຕາມປູຊະນີຍະສະຖານສູງນັ້ນ
ແລະເມື່ອລາວຈະເຂົ້າມາໃນສະຖານທີ່ບໍລິສຸດຂອງຕົນ ເພື່ອຈະອະທິຖານ

ລາວກໍຈະບໍ່ໄດ້ຮັບຜົນ

## ຄຳທຳນວຍເລື່ອງໂມອາບ

13ນີ້ເປັນພຣະຄຳ ຊຶ່ງພຣະຜູ້ເປັນເຈົ້າບອກກ່ຽວກັບໂມອາບໃນອະດີດເປັນດັ່ງນີ້: 14ແຕ່ບັດນີ້
ພຣະຜູ້ເປັນເຈົ້າໄດ້ບອກແລ້ວວ່າ "ພາຍໃນສາມປີ ຕາມປີທີ່ຈ້າງລູກຈ້າງ ສະຫງ່າລາສີຂອງ
ໂມອາບ ຈະຖືກຢຽບຢໍ່າ ແມ່ນແຕ່ປະຊາຊົນຈຳນວນຫລວງຫລາຍຂອງພວກເຂົາທັງໝົດກໍດີ
ຈະສູນຫາຍໄປ ແລະຄົນທີ່ເຫລືອຢູ່ນັ້ນ ກໍຈະໜ້ອຍລົງແລະອ່ອນເພຍ"

# ບົດທີ 17

## ພຣະໂອວາດກ່ຽວກັບເມືອງດາມາເຊ

1ພຣະໂອວາດກ່ຽວກັບເມືອງດາມາເຊ
ເບິ່ງແມດາມາເຊຈະບໍ່ເປັນເມືອງອີກຕໍ່ໄປ
ແຕ່ຈະກາຍເປັນກອງສິ່ງຂອງທີ່ຮົກຮ້າງເພພັງ
2 ເມືອງຕ່າງໆຂອງອາໂຣເອຈະຮ້າງເປົ່າຕະຫລອດໄປ
ແລະຈະເປັນບ່ອນສຳລັບຝູງແບ້ຝູງແກະ
ຊຶ່ງມັນຈະນອນລົງ ໂດຍບໍ່ມີຜູ້ໃດຈະເຮັດໃຫ້ມັນຢ້ານ ແລະແຕກຕື່ນໄປ
3 ປ້ອມປ້ອງກັນທີ່ເຂັ້ມແຂງໃນເອຟຣາຢິມ
ແລະລາຊະອານາຈັກຈະສູນຫາຍໄປ ແລະຄົນທີ່ເຫລືອຢູ່ຂອງຊີເຣຍ
ພວກເຂົາຈະເປັນຄືກັບສະຫງ່າລາສີຂອງຄົນອິສຣາເອນ,
ພຣະຜູ້ເປັນເຈົ້າແຫ່ງຈັກກະວານ ບອກດັ່ງນີ້ແຫລະ
4 ແລະຕໍ່ມາໃນມື້ນັ້ນ ສະຫງ່າລາສີຂອງຢາໂຄບຈະຕົກຕໍ່າ
ແລະຄວາມອ້ວນພີຂອງລາວ ຈະຈ່ອຍຜອມລົງ
5 ຈະເປັນເໝືອນກັບຄົນທີ່ກ່ຽວເຂົ້າຄືກ່ຽວເຂົ້າທີ່ຕັ້ງຢູ່
ແລະແຂນຂອງລາວຈະກ່ຽວຮວງເຂົ້າ
ແລະຈະເປັນເໝືອນກັບຄົນໜຶ່ງທີ່ເກັບຮວງເຂົ້າໃນຮ່ອມພູເຂົາເຣຟາຢິມ
6 ຈະມີໝາກອະງຸ່ນເຫລືອຢູ່ໃນບ່ອນນັ້ນຄື ເມື່ອຊັ່ນຕົ້ນໝາກກອກເທດ
ເພື່ອໃຫ້ໝາກຫລົ່ນ ໝາກຈະເຫລືອ ຢູ່ເທິງປາຍຍອດສູງທີ່ສຸດສອງສາມໜ່ວຍ
ຫລືເຫລືອຢູ່ເທິງງ່າໄມ້ສີ່ຫ້າໜ່ວຍ
ພຣະຜູ້ເປັນເຈົ້າພຣະເຈົ້າແຫ່ງອິສຣາເອນກ່າວດັ່ງນີ້ແຫລະ
7 ໃນມື້ນັ້ນ ມະນຸດຈະເບິ່ງພຣະຜູ້ສ້າງຕົນ
ແລະໃນຕາຂອງພວກເຂົາຈະຫລຽວເຫັນອົງບໍລິສຸດຂອງອິສຣາເອນ
8 ພວກເຂົາຈະບໍ່ເບິ່ງແທ່ນບູຊາທັງຫລາຍດ້ວຍຜົນງານຈາກມືຂອງຕົນ
ແລະພວກເຂົາຈະບໍ່ເອົາໃຈໃສ່ຕໍ່ສິ່ງທີ່ນິ້ວມືຂອງພວກເຂົາເອງໄດ້ກະທຳຂຶ້ນ
ບໍ່ວ່າຈະເປັນເສົາຮູບເຄົາລົບ ຫລືບັນດາຮູບເຄົາລົບທັງຫລາຍ

9 ໃນມື້ນັ້ນ ເມືອງທີ່ມີກຳແພງຂອງພວກເຂົາຈະເປັນຄືກັບບ່ອນຮ້າງໃນດົງຮົກ
ແລະເທິງຍອດພູສູງ ຊຶ່ງພວກເຂົາໄດ້ປະ ຖິ້ມແລ້ວຕໍ່ໜ້າພວກລູກຫລານອິສຣາເອນ
ກໍຈະເປັນບ່ອນທີ່ຮົກຮ້າງ
10 ເພາະວ່າເຈົ້າໄດ້ຫລົງລືມພຣະເຈົ້າແຫ່ງຄວາມພົ້ນຂອງເຈົ້າ
ແລະເຈົ້າບໍ່ໄດ້ຈົດຈຳສີລາອັນເຂັ້ມແຂງຂອງເຈົ້າ
ສະນັ້ນ ເຈົ້າຈະປູກຕົ້ນໝາກໄມ້ທີ່ມັກຫລາຍ ແລະຈະປູກກິ່ງໄມ້ຕ່າງຊາດລົງ
11 ໃນມື້ນັ້ນ ເຈົ້າຈະປູກຝັງ ເຈົ້າຈະເຮັດຮົ້ວອ້ອມ ແລະຕອນເຊົ້າເຈົ້າຈະເຮັດໃຫ້ມັນປົ່ງຂຶ້ນ
ແຕ່ໃນມື້ທີ່ຕ້ອງເກັບເອົາ ຜົນລະປູກນັ້ນຈະສູນຫາຍໄປ
ແລະຄວາມເຈັບປວດນັ້ນປົວໃຫ້ດີບໍ່ໄດ້.
ໃນມື້ທີ່ເຈົ້າປູກມັນ ແລະຈະເຮັດໃຫ້ມັນອອກດອກໃນຕອນເຊົ້າຂອງມື້ທີ່ເຈົ້າຫວ່ານ
ເຖິງປານນັ້ນ ຜົນການເກັບກ່ຽວກໍຈະໜີໄປ ໃນມື້ແຫ່ງຄວາມທຸກໃຈ
ແລະຄວາມເສົ້າໂສກຢ່າງເຫລືອຫລາຍ
12 ວິບັດແກ່ຊົດຊາດທັງຫລາຍ ຊຶ່ງເຮັດສຽງດັງກ້ອງຄືທະເລກ້ອງດັງ
ແລະສຽງອຶກກະທຶກຂອງຊົນຊາດທັງຫລາຍ
ຄືສຽງອຶກກະທຶກຂອງນໍ້າທີ່ກຳລັງຖ້ວມຂຶ້ນ
13 ຊົນຊາດທັງຫລາຍຕື່ນຂຶ້ນ ຄືກັບສຽງອຶກກະທຶກຂອງນໍ້າຖ້ວມ
ແຕ່ພຣະເຈົ້າຈະຕິຕຽນພວກເຂົາໄວ້ ແລະພວກເຂົາຈະໜີໄປໄກ
ຈະຖືກໄລ່ໄປຄືລົມພັດແກບຢູ່ເທິງພູເຂົາ ຄືພືດໃບແຫ້ງປົວໄປຕໍ່ໜ້າລົມຫົວກຸດ
14 ເບິ່ງແມ ເມື່ອຮອດຕອນຄໍ່າ ຄວາມຢ້ານກົວອັນພິລຶກກໍມາ
ໃນຍາມຮຸ່ງເຊົ້າພວກເຂົາກໍບໍ່ຢູ່ແລ້ວ
ນີ້ເປັນສ່ວນແບ່ງຂອງບັນດາຜູ້ທີ່ຍາດຊິງເອົາສິ່ງຂອງຂອງພວກເຮົາ
ແລະສິ່ງຂອງທັງຫລາຍຂອງພວກເຂົາທີ່ປຸ້ນເອົາຈາກພວກເຮົາ

# ບົດທີ 18

## ປະເທດເອຢິບໃນສະໄໝທີ່ອິສຣາເອນຖືກໂຮມເຂົ້າກັນອີກ

1 ວິບັດແກ່ແຜ່ນດິນທັງຫລາຍທີ່ພືປີກໃຫ້ເປັນຮົ່ມເງົາ
ຕາມແມ່ນໍ້າທັງຫລາຍແຫ່ງເອທີໂອເປຍ
2 ໄດ້ໃຊ້ພວກລາຊະທູດໄປໂດຍເຮືອທີ່ເຮັດດ້ວຍໄມ້ອໍ້ແລ່ນເທິງໜ້ານໍ້າ ຈົ່ງກ່າວວ່າ
“ພວກລາຊະທູດຈົ່ງໄປໂດຍໄວ
ຈົ່ງໄປຍັງປະຊາຊາດທີ່ຖືກກະຈັດກະຈາຍ ແລະຖືກທຳລາຍແລ້ວ,
ຈົ່ງໄປຫາຊົນຊາດທີ່ພວກເຂົາຢ້ານທັງໃກ້ແລະໄກ, ໄປຍັງປະຊາຊາດທີ່ເຂັ້ມແຂງ
ແລະມັກຊະນະ ຊຶ່ງແຜ່ນດິນຂອງພວກເຂົາມີແມ່ນໍ້າແບ່ງ”
3 ທ່ານທັງປວງຜູ້ເປັນຊາວໂລກ ທ່ານອາໄສຢູ່ເທິງແຜ່ນດິນໂລກ

ເມື່ອເຂົາຍົກສັນຍານຂຶ້ນເທິງພູເຂົາ ຈົ່ງເບິ່ງ ເມື່ອເຂົາເປົ່າເຂົາສັດ ຈົ່ງຟັງ
4 ເພາະວ່າພຣະຜູ້ເປັນເຈົ້າບອກແກ່ຂ້າພະເຈົ້າດັ່ງນີ້ວ່າ
"ເຮົາຈະພັກຜ່ອນ ແລະຈະພິຈາລະນາຈາກບ່ອນອາໄສຂອງເຮົາ
ຄືຄວາມຮ້ອນທີ່ປະກົດຢູ່ເທິງຜັກຫຍ້າ
ຄືເມກແຫ່ງນ້ຳໝອກໃນຄວາມຮ້ອນຂອງລະດູເກັບກ່ຽວ"
5 ເພາະວ່າກ່ອນເຖິງລະດູເກັບກ່ຽວ ເມື່ອເຂົ້າຖອກແລ້ວ
ແລະດອກກາຍເປັນໝາກອະງຸ່ນຊຽວ
ແລະກຳລັງຈະສຸກ ພຣະອົງຈະຕັດກິ່ງອອກດ້ວຍເຫລັກກ່ຽວຕັດຍອດ
ແລະສາຂາທັງຫລາຍນັ້ນລົງເສຍ
6 ພວກເຂົາທັງໝົດຈະຖືກປະຖິ້ມໄວ້ໃຫ້ແກ່ນົກອິນຊີທີ່ຢູ່ເທິງພູເຂົາ
ແກ່ສັດປ່າຂອງແຜ່ນດິນໂລກ ແລະນົກທີ່ກິນເນື້ອ
ຈະຈັບຢູ່ເທິງພວກເຂົາຈົນໝົດລະດູຮ້ອນ
ແລະບັນດາສັດເດຍລະສານຂອງແຜ່ນດິນໂລກທັງປວງ
ຈະຢູ່ເທິງພວກເຂົາຈົນໝົດລະດູໜາວ
7 ໃນເວລານັ້ນພວກເຂົາຈະນຳເຄື່ອງຖວາຍມາແດ່ພຣະຜູ້ເປັນເຈົ້າແຫ່ງຈັກກະວານ
ເປັນເຄື່ອງຖວາຍທີ່ມາຈາກຊົນຊາດທີ່ຖືກກະຈັດກະຈາຍອອກໄປ
ແລະຈາກຊົນຊາດທີ່ພວກເຂົາຢ້ານທັງໃກ້ ແລະໄກຈາກປະຊາຊາດທີ່ເຂັ້ມແຂງ
ແລະມັກເອົາຊະນະ ຊຶ່ງແຜ່ນດິນຂອງພວກເຂົາມີແມ່ນ້ຳແບ່ງ
ມາຍັງສະຖານທີ່ແຫ່ງພຣະນາມຂອງພຣະຜູ້ເປັນເຈົ້າແຫ່ງຈັກກະວານ ຄືພູເຂົາຊີໂອນ

# ບົດທີ 19

## ພຣະໂອວາດກ່ຽວກັບເອຢິບ

1 ພຣະໂອວາດກ່ຽວກັບເອຢິບ:
ເບິ່ງແມພຣະຜູ້ເປັນເຈົ້າຊົງຂີ່ເມກອັນວ່ອງໄວ
ແລະຈະສະເດັດມາເອຢິບຕໍ່ພຣະພັກພຣະອົງ
ຮູບເຄົາລົບແຫ່ງເອຢິບຈະສັ່ນສະເທືອນຫລາຍຍ້ອນການມາປະກົດຂອງພຣະອົງ
ແລະຫົວໃຈຂອງຄົນເອຢິບກໍເປື່ອຍໄປພາຍໃນຕົວພວກເຂົາ
2 ແລະເຮົາຈະຍົວະໃຫ້ຄົນເອຢິບຕໍ່ສູ້ກັບຄົນເອຢິບ
ພວກເຂົາຈະສູ້ຮົບກັນ ທຸກຄົນຈະຕໍ່ສູ້ພີ່ນ້ອງຂອງຕົນ
ແລະທຸກຄົນຈະຕໍ່ສູ້ເພື່ອນບ້ານຂອງຕົນ
ເມືອງຕໍ່ສູ້ກັບເມືອງ ລາຊະອານາຈັກຕໍ່ສູ້ກັບລາຊະອານາຈັກ
3 ວິນຍານຂອງຄົນເອຢິບກໍຈະຫາຍໄປ ແລະເຮົາຈະເຮັດໃຫ້ແຜນງານຂອງພວກເຂົາ
ພວກເຂົາຈະໄປປຶກສາບັນດາຮູບເຄົາລົບ ແລະພວກໝໍມໍ ໝໍເຢົາ ແລະໝໍທຳນວາຍ

4 ເຮົາຈະມອບຄົນ ເອຢິບ ໄວ້ໃນມືຂອງນາຍທີ່ແຂງກະດ້າງ
ແລະກະສັດທີ່ໂຫດຮ້າຍຄົນໜຶ່ງຈະປົກຄອງເໜືອພວກເຂົາ
ອົງພຣະຜູ້ເປັນເຈົ້າພຣະເຈົ້າ ແຫ່ງຈັກກະວານກ່າວດັ່ງນີ້ແຫລະ
5 ນ້ຳຈະແຫ້ງໄປຈາກທະເລ ແລະແມ່ນ້ຳຈະບົກແຫ້ງ
6 ຫ້ວຍທັງຫລາຍຈະເນົ່າເໝັນ ແລະແມ່ນ້ຳແຫ່ງການປ້ອງກັນຈະນ້ອຍລົງ
ແລະແຫ້ງໄປ ຕົ້ນອໍ້ ແລະເຄືອຫວາຍຈະຫ່ຽວແຫ້ງໄປ
7 ປ່າຫຍ້າຢູ່ແຄມແມ່ນ້ຳນິເລ ແລະສວນໄຮ່ນາທີ່ຫວ່ານລົງຂ້າງແມ່ນ້ຳນັ້ນຈະຫ່ຽວແຫ້ງໄປ
ແລະຖືກຂັບໄລ່ອອກໄປ ແລະບໍ່ມີອີກ
8 ຊາວປະມົງຈະຮ້ອງທຸກ ຄືບັນດາຜູ້ທີ່ຕຶກເບັດໃນແມ່ນ້ຳຈະໄວ້ທຸກ
ແລະຜູ້ທີ່ຖິ້ມມອງໃນນ້ຳຈະອ່ອນແຮງລົງ
9 ຄົນງານທີ່ເຮັດຜ້າປ່ານຈະອັບອາຍ ທັງຄົນທີ່ຕໍ່າຫູກຝ້າຍຂາວດ້ວຍ
10 ບັນດາຜູ້ທີ່ເປັນຫລັກຂອງແຜ່ນດິນໂລກຕ້ອງຖືກບີບຄັ້ນ
ແລະບັນດາຜູ້ທີ່ເຮັດວຽກຮັບຈ້າງຈະເສົ້າໃຈ
11 ພວກເຈົ້ານາຍແຫ່ງ ໂຊອານ ໂງ່ຈ້າ
ທີ່ປຶກສາທີ່ສະຫລາດຂອງ ຟາຣາໂອ ໃຫ້ຄຳປຶກສາຢ່າງໂງ່ຈ້າ
ພວກເຈົ້າຈະເວົ້າກັບ ຟາຣາໂອ ໄດ້ຢ່າງໃດວ່າ
“ຂ້ານ້ອຍເປັນລູກຂອງນັກປາດ ເປັນເຊື້ອສາຍຂອງກະສັດບູຮານ”
12 ພວກເພິ່ນຢູ່ໃສ? ນັກປາດຂອງທ່ານຢູ່ໃສ? ໃຫ້ພວກເຂົາບອກທ່ານ
ແລະໃຫ້ພວກເຂົາແຈ້ງວ່າພຣະເຈົ້າ ແຫ່ງຈັກກະວານມີພຣະປະສົງອັນໃດກັບ ເອຢິບ
13 ເຈົ້ານາຍແຫ່ງ ໂຊອານ ກາຍເປັນຄົນໂງ່
ແລະເຈົ້ານາຍແຫ່ງ ເມັມຟິດ ຖືກຫລອກລວງແລ້ວ
ບັນດາຜູ້ທີ່ເປັນເຈົ້ານາຍຕະກູນຂອງ ເອຢິບ ໄດ້ນຳ ເອຢິບ ໃຫ້ຫລົງໄປ
14 ພຣະຜູ້ເປັນເຈົ້າ ໄດ້ຖອກວິນຍານແຫ່ງຄວາມ ຫຍຸ້ງຍາກໄວ້ໃນ ເອຢິບ
ແລະພວກເຂົາທັງຫລາຍໄດ້ເຮັດໃຫ້ ເອຢິບ ຫລົງຜິດ
ໄປໃນການກະທຳທັງໝົດຂອງມັນ
ເໝືອນດັ່ງຄົນເມົາໂຊເຊຢູ່ເທິງສິ່ງທີ່ຕົນຮາກອອກ
15 ບໍ່ມີອັນໃດທີ່ຈະເຮັດໄດ້ເພື່ອຊ່ວຍ ເອຢິບ ຊຶ່ງຫົວກໍດີ ຫາງກໍດີ
ຫລືໃບຕານກໍດີ ຕົ້ນເຄືອຫວາຍກໍດີ ພວກມັນອາດຈະເຮັດໄດ້

16ໃນມື້ນັ້ນ ຄົນ ເອຢິບ ຈະເປັນເໝືອນກັບຜູ້ຍິງ ຈະຢ້ານຈົນຕົວສັ່ນ ເມື່ອເຫັນພຣະຫັດຂອງ
ພຣະເຈົ້າ ແຫ່ງຈັກກະວານ ກວາດແກວ່ງຢູ່ເໜືອພວກເຂົາ 17ແລະແຜ່ນດິນ ຢູດາ ຈະເປັນເຫດໃຫ້
ຄົນ ເອຢິບ ຢ້ານກົວ ເມື່ອກ່າວຊື່ໃຫ້ຄົນໜຶ່ງຄົນໃດ ພວກເຂົາກໍຈະຢ້ານ ເພາະວ່າ ພຣະຜູ້ເປັນ-
ເຈົ້າ ແຫ່ງຈັກກະວານມີພຣະປະສົງເພື່ອຈະຕໍ່ສູ້ພວກເຂົາ

18ໃນມື້ນັ້ນ ຈະມີຫ້າຫົວເມືອງໃນແຜ່ນດິນ ເອຢິບ ຊຶ່ງເວົ້າພາສາຂອງ ການາອານ ແລະປະ-

ຕິຍານຕໍ່ ພຣະເຈົ້າ ແຫ່ງຈັກກະວານ ເມືອງໜຶ່ງໃນຫ້າເມືອງນັ້ນ ພວກເຂົາຈະເອີ້ນວ່າ ເມືອງ
ແຫ່ງການທຳລາຍ
19ໃນມື້ນັ້ນ ຈະມີແທ່ນບູຊາ ແທ່ນໜຶ່ງສຳລັບ ພຣະຜູ້ເປັນເຈົ້າ ໃນທ່າມກາງ ແຜ່ນດິນ ເອຢິບ
ແລະມີເສົາສັກສິດສຳລັບ ພຣະຜູ້ເປັນເຈົ້າ ຢູ່ທີ່ຊາຍແດນ 20ຊຶ່ງຈະເປັນໝາຍສຳຄັນ ແລະເປັນ
ພະຍານໃນແຜ່ນດິນ ເອຢິບ ເຖິງ ພຣະຜູ້ເປັນເຈົ້າ ແຫ່ງຈັກກະວານ ເພາະວ່າ ເມື່ອເຂົາທັງຫລາຍ
ຮ້ອງທູນຕໍ່ ພຣະຜູ້ເປັນເຈົ້າ ຍ້ອນມີຜູ້ບີບບັງຄັບພວກເຂົາ ພຣະອົງຈະສົ່ງຜູ້ຊ່ວຍຜູ້ຍິ່ງໃຫຍ່ມາໃຫ້
ພວກເຂົາ ແລະຜູ້ນັ້ນຈະຊ່ວຍພວກເຂົາໃຫ້ພົ້ນ 21ພຣະຜູ້ເປັນເຈົ້າ ຈະສະແດງພຣະອົງໃຫ້ເປັນທີ່
ຮູ້ຈັກແກ່ຄົນ ເອຢິບ ແລະຄົນ ເອຢິບ ຈະຮູ້ຈັກ ພຣະຜູ້ເປັນເຈົ້າ ໃນມື້ນັ້ນ ແລະພວກເຂົາຈະບົວ-
ລະບັດດ້ວຍເຄື່ອງບູຊາແລະດ້ວຍເຄື່ອງຖວາຍ ພວກເຂົາຈະປະຕິຍານຕໍ່ ພຣະຜູ້ເປັນເຈົ້າ ແລະ
ປະຕິບັດຕາມ 22ພຣະຜູ້ເປັນເຈົ້າ ຈະໂຈມຕີ ເອຢິບ ພຣະອົງຈະໂຈມຕີແລະຈະປິ່ນປົວໃຫ້ດີ ແລະ
ພວກເຂົາຈະຫັນກັບມາຫາ ພຣະຜູ້ເປັນເຈົ້າ ແລະພຣະອົງຈະຊົງໂຜດຮັບເອົາພວກເຂົາ ແລະ
ຈະປິ່ນປົວເຂົາໃຫ້ດີປົກກະຕິ
23ໃນມື້ນັ້ນ ຈະມີທາງຫລວງຈາກ ເອຢິບ ເຖິງ ອັດຊີເຣຍ ແລະຄົນ ອັດຊີເຣຍ ຈະເຂົ້າມາໃນ ເອ-
ຢິບ ແລະຄົນ ເອຢິບ ມາອັດຊີເຣຍ ແລະຄົນ ເອຢິບ ຈະບົວລະບັດພ້ອມກັບຄົນ ອັດຊີເຣຍ
24ໃນມື້ນັ້ນ ອິສຣາເອນ ຈະເປັນທີສາມກັບ ເອຢິບ ແລະ ອັດຊີເຣຍ ເປັນພຣະພອນໃນທ່າມ-
ກາງ ແຜ່ນດິນໂລກ 25ເຫດວ່າ ພຣະຜູ້ເປັນເຈົ້າ ແຫ່ງຈັກກະວານຈະອວຍພຣະພອນໃຫ້ແກ່ພວກ
ເຂົາ "ເອຢິບ ຊົນຊາດຂອງເຮົາ ຈົ່ງໄດ້ຮັບພອນ ແລະ ອັດຊີເຣຍຜົນງານຈາກມືຂອງເຮົາ ແລະ
ອິສຣາເອນ ມໍລະດົກຂອງເຮົາ"

# ບົດທີ 20

## ອັດຊີເຣຍຈະທຳລາຍເອຢິບ ແລະເອທີໂອເປຍ

1ໃນປີທີ່ ຕາຕານ ຜູ້ທີ່ ສາໂກນ ກະສັດແຫ່ງອັດຊີເຣຍ ໄດ້ໃຊ້ໄປຍັງເມືອງ ອາຊະໂດດ ແລະ
ໄດ້ຕໍ່ສູ້ຍຶດເອົາເມືອງ ອາຊະໂດດ ນັ້ນໄດ້ 2ໃນຄາວນັ້ນ ພຣະຜູ້ເປັນເຈົ້າ ໄດ້ກ່າວໂດຍ ເອຊາຢາ
ລູກຊາຍ ອາໂມດ ວ່າ "ຈົ່ງໄປແກ້ຜ້າກະສອບອອກຈາກບັ້ນແອວຂອງເຈົ້າເທີ້ນ ແລະເອົາເກີບ
ອອກຈາກຕີນຂອງເຈົ້າ" ແລະເພິ່ນກໍເຮັດຕາມ ຄືຍ່າງຕີນເປົ່າ
3ພຣະຜູ້ເປັນເຈົ້າບອກວ່າ "ເອຊາຢາ ຜູ້ຮັບໃຊ້ຂອງເຮົາຍ່າງຕີນເປົ່າ ແລະເປືອຍກາຍສາມປີ
ເປັນໝາຍສຳຄັນ ເປັນການອັດສະຈັນແກ່ ເອຢິບ ແລະແກ່ ເອທີໂອເປຍ ສັນໃດ 4ກະສັດແຫ່ງ
ອັດຊີເຣຍ ຈະນຳຄົນ ເອຢິບ ໄປເປັນຊະເລີຍ ແລະຈະກວາດຄົນ ເອທີໂອເປຍ ໄປເປັນຊະເລີຍ ທັງ
ຄົນໜຸ່ມສາວ ແລະຄົນແກ່ ໂດຍໃຫ້ເປືອຍກາຍ ແລະຕີນເປົ່າ ເປີດກົ້ນເປັນທີ່ລະອາຍແກ່ ເອຢິບ
ສັນນັ້ນ 5ແລ້ວພວກເຂົາກໍຈະຕົກໃຈ ແລະອັບອາຍຍ້ອນ ເອທີໂອເປຍ ຄວາມຫວັງຂອງພວກເຂົາ
ທີ່ພວກເຂົາໄດ້ເຊື່ອໃຈ ດ້ວຍ ເອຢິບ ທີ່ເປັນຄວາມຈອງຫອງຂອງພວກເຂົາ ແລະຄວາມໂອ້ອວດ
ຂອງພວກເຂົາ 6ແລະຊາວເກາະນີ້ຈະກ່າວໃນມື້ນັ້ນວ່າ "ເບິ່ງແມ ນີ້ແຫລະຜູ້ຊຶ່ງເຮົາຫວັງໃຈ
ແລະຜູ້ຊຶ່ງເຮົາແລ່ນໄປຂໍຄວາມຊ່ວຍໃຫ້ພົ້ນຈາກກະສັດ ອັດຊີເຣຍ ແລ້ວເຮົາຈະໜີໃຫ້ພົ້ນໄດ້

ຢ່າງໃດ"

# ບົດທີ 21

## ພຣະໂອວາດກ່ຽວກັບຖິ່ນແຫ້ງແລ້ງກັນດານ ເມື່ອກະສັດເສັນນາເກຣິບຈະບຸກລຸກ

1 ພຣະໂອວາດກ່ຽວກັບຖິ່ນແຫ້ງແລ້ງກັນດານຂອງທະເລ:
ຄືລົມຫົວກຸດໃນພາກໃຕ້ພັດກ້ຽງໄປ
ມັນມາຈາກຖິ່ນແຫ້ງແລ້ງກັນດານ ຈາກແຜ່ນດິນອັນໜ້າຢ້ານ
2 ເຂົາບອກນິມິດທີ່ໂຫດຮ້າຍແກ່ຂ້າພະເຈົ້າ
ນິມິດທີ່ບໍ່ມີຄວາມເມດຕາໄດ້ປະກົດແກ່ຂ້າພະເຈົ້າວ່າ
ຜູ້ປຸ້ນກໍເຂົ້າປຸ້ນ ແລະຜູ້ທຳລາຍກໍເຂົ້າທຳລາຍ
ເອລາມເອີຍ ຈົ່ງຂຶ້ນໄປເມເດຍເອີຍ ຈົ່ງເຂົ້າປິດລ້ອມມັນ
ຊຶ່ງໃຫ້ເກີດການຖອນຫັນ ໃຈທັງໝົດ ເຮົາໄດ້ກະທຳໃຫ້ໝົດໄປແລ້ວ
3 ເຫດສະນັ້ນ ບັ້ນແອວຂອງຂ້າພະເຈົ້າຈຶ່ງເຕັມໄປດ້ວຍຄວາມເຈັບປວດ
ຄວາມເຈັບປວດຢ່າງກະທັນຫັນໄດ້ມາເຖິງ
ຂ້າພະເຈົ້າເໝືອນຄວາມເຈັບປວດຂອງຜູ້ຍິງທີ່ກຳລັງຈະເກີດລູກ
ຂ້າພະເຈົ້າຈົນໃຈ ເພາະສິ່ງທີ່ໄດ້ຍິນ ຂ້າພະເຈົ້າທໍ້ຖອຍ ເພາະສິ່ງທີ່ໄດ້ເຫັນ
4 ຈິດໃຈຂອງຂ້າພະເຈົ້າວຸ້ນວາຍໄປ ຄວາມຢ້ານກົວເຮັດໃຫ້ຂ້າພະເຈົ້າສັ່ນເຊັນ
ແສງມົວໆຊຶ່ງຂ້າພະເຈົ້າຫວັງ ກັບເຮັດໃຫ້ຂ້າພະເຈົ້າສັ່ນສະເທືອນ
5 ຈົ່ງຈັດຕຽມໂຕະໄວ້ ຈົ່ງເຝົ້າຢູ່ເທິງຫໍຄອຍ ຈົ່ງກິນ ຈົ່ງດື່ມ
ພວກເຈົ້ານາຍທັງຫລາຍເອີຍ ຈົ່ງລຸກຂຶ້ນລ້າງໂລ່ໄວ້ ດ້ວຍນ້ຳມັນ
6 ເພາະວ່າອົງພຣະຜູ້ເປັນເຈົ້າໄດ້ບອກກັບຂ້າພະເຈົ້າດັ່ງນີ້ວ່າ
"ຈົ່ງໄປ ບອກຄົນຍາມໃຫ້ລາວໄປຮ້ອງປະກາດສິ່ງທີ່ລາວເຫັນ"
7 ລາວໄດ້ເຫັນລົດມ້າ ແລະຄົນຂີ່ມ້າສອງຄົນ ຄົນຂີ່ລາ ຄົນຂີ່ອູດ
ລາວໄດ້ຟັງດ້ວຍຄວາມຕັ້ງໃຈ
8 ແລ້ວຜູ້ທີ່ເຫັນໄດ້ຮ້ອງຄືກັບສິງໂຕໜຶ່ງວ່າ
"ຂ້າແດ່ອົງພຣະຜູ້ເປັນເຈົ້າຂ້າພະອົງຢືນຢູ່ເທິງຫໍຄອຍຕະຫລອດໄປໃນກາງເວັນ,
ຂ້າພະອົງປະຈຳຢູ່ທີ່ຕຳແໜ່ງຂອງຂ້າພະອົງຕະຫລອດຫລາຍຄືນ
9 ເບິ່ງແມ ລົດມ້າກຳລັງມາ ມີຄົນຂີ່ມ້າຄືທະຫານມ້າເປັນຄູ່ໆ"
ແລະລາວຕອບວ່າ "ບາບີໂລນລົ້ມແລ້ວ ລົ້ມແລ້ວ
ບັນດາຮູບເຄົາລົບທັງໝົດແຫ່ງພະຂອງນາງ ພຣະອົງທຳລາຍລົງສູ່ພື້ນດິນ"
10 ທ່ານຜູ້ຖືກນວດ ແລະຜູ້ຖືກຝັດຂອງຂ້າພະເຈົ້າເອີຍ
ຂ້າພະເຈົ້າໄດ້ຍິນຖ້ອຍຄຳອັນໃດຈາກພຣະເຈົ້າແຫ່ງຈັກກະວານ

ພຣະເຈົ້າ ແຫ່ງ ອິສຣາເອນ ຂ້າພະເຈົ້າກໍຮ້ອງປະກາດແກ່ທ່ານແນວນັ້ນ

## ພຣະໂອວາດກ່ຽວກັບເອໂດມ

[11]ພຣະໂອວາດກ່ຽວກັບ ເອໂດມ
ມີຄົນໜຶ່ງເອີ້ນຂ້າພະເຈົ້າຈາກ ເສອີວ່າ
"ຄົນຍາມເອີ່ຍ ເດິກປານໃດແລ້ວ ຄົນຍາມເອີ່ຍ ເດິກປານໃດແລ້ວ"
[12] ຄົນຍາມຕອບວ່າ "ຮຸ່ງເຊົ້າພວມມາເຖິງ ກາງຄືນກໍພວມມາເໝືອນກັນ
ຖ້າພວກທ່ານຢາກສືບຖາມ ກໍຈົ່ງສືບຖາມເຖີດ ຈົ່ງກັບຄືນ, ຈົ່ງມາ"

## ພຣະໂອວາດກ່ຽວກັບອາຫລັບ

[13]ພຣະໂອວາດກ່ຽວກັບ ອາຫລັບ
ໂອ ຂະບວນພໍ່ຄ້າຂອງຄົນ ເດດານ ເອີຍ ເຈົ້າຈະພັກຢູ່ໃນດົງທຶບໃນ ອາຫລັບ
[14] ຈົ່ງເອົານ້ຳມາຕ້ອນຮັບຄົນທີ່ຫິວນ້ຳ,
ຊາວແຜ່ນດິນ ເຕມາ ໄດ້ເອົາເຂົ້າຈີ່ຂອງພວກເຂົາມາຕ້ອນ ຮັບຄົນລີ້ໄພ
[15] ເພາະວ່າພວກເຂົາໄດ້ປົບໜີຈາກດາບ
ຈາກດາບທີ່ຖອດອອກ ແລະຈາກທະນູທີ່ໂກ່ງຢູ່ ແລະຈາກສົງຄາມ
ຊຶ່ງເຮັດໃຫ້ທຸກທໍລະມານຢ່າງແສນສາຫັດ
[16]ເພາະວ່າອົງ ພຣະຜູ້ເປັນເຈົ້າ ບອກກັບຂ້າພະເຈົ້າດັ່ງນີ້ວ່າ ສະຫງ່າລາສີທັງໝົດຂອງ ເກດາ
ຈະ ເຖິງທີ່ສຸດພາຍ ໃນປີດຽວຕາມປີຈ້າງລູກຈ້າງ [17]ແລະນັກທະນູທີ່ ເຫລືອຢູ່ຈາກທະຫານລູກ
ຫລານຊາວ ເກດາກໍຈະຫລຸດໜ້ອຍລົງ ເພາະວ່າພຣະຜູ້ເປັນເຈົ້າ ພຣະເຈົ້າຂອງ ອິສຣາເອນໄດ້
ບອກໄວ້ແລ້ວ"

# ບົດທີ 22

## ພຣະໂອວາດກ່ຽວກັບຮ່ອມພູນິມິດ

[1]ພຣະໂອວາດກ່ຽວກັບຮ່ອມພູນິມິດທີ່ເຈົ້າໄດ້ຂຶ້ນໄປ
ເຈົ້າທຸກຄົນທີ່ເທິງຫລັງຄາເຮືອນນັ້ນ ເປັນເລື່ອງອັນໃດກັນ
[2] ເຈົ້າຜູ້ເປັນເມືອງທີ່ເຕັມໄປດ້ວຍການໂຫ່ຮ້ອງ
ເມືອງທີ່ອຶກກະທຶກຄຶກໂຄມ ນະຄອນທີ່ເຕັ້ນໂດດ
ຜູ້ທີ່ຖືກຂ້າຂອງເຈົ້າບໍ່ໄດ້ຖືກຂ້າດ້ວຍດາບ ຫລືຕາຍໃນສົງຄາມ
[3] ຜູ້ຄອງເມືອງຂອງເຈົ້າທັງໝົດໜີໄປແລ້ວ ພວກເຂົາຖືກຈັບໄດ້ໂດຍນາຍທະນູ
ຊາຍໜຸ່ມຂອງເຈົ້າທຸກຄົນຖືກຈັບເຖິງວ່າພວກເຂົາໄດ້ໜີໄປໄກແລ້ວ
[4] ເຫດສັນນີ້ ຂ້າພະເຈົ້າຈຶ່ງວ່າ "ຢ່າເບິ່ງຂ້າພະເຈົ້າ
ໃຫ້ຂ້າພະເຈົ້າຫລັ່ງນ້ຳຕາຢ່າງຂົມຂື່ນ ຢ່າຊູຟ້າວເລົ້າໂລມຂ້າພະເຈົ້າເລີຍ
ເຫດດ້ວຍການທຳລາຍລູກສາວແຫ່ງຊົນຊາດຂອງຂ້າພະເຈົ້າ"
[5] ເພາະວ່າອົງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ແຫ່ງຈັກກະວານມີມື້ຂອງຄວາມວຸ້ນວາຍ

ຄວາມຢຽບຢ່ຳ ແລະຄວາມຫຍຸ້ງຍາກໃນຮ່ອມພູນິມິດ
ຄືການພັງກຳແພງລົງ ແລະໂຫ່ຮ້ອງໃຫ້ແກ່ພູເຂົາ
6 ເອລາມຈັບທະນູ ກັບລົດຮົບ
ແລະທະຫານກັບທະຫານມ້າແລະກີເຣກໍຖືໂລ່ອອກໄປ
7 ຕໍ່ມາ ຮ່ອມພູທີ່ດີທີ່ສຸດຂອງທ່ານຈະເຕັມໄປດ້ວຍລົດຮົບ
ແລະທະຫານມ້າຈະເຂົ້າປະຈຳທີ່ປະຕູເມືອງ
8 ພຣະອົງຊົງເອົາສິ່ງນັ້ນປົດບັງຢູດາໄປເສຍ
ໃນມື້ນັ້ນທ່ານໄດ້ເບິ່ງໄປທີ່ອາວຸດໃນດົງ
9 ທ່ານໄດ້ເຫັນປ່ອງກຳແພງເມືອງຂອງດາວິດວ່າມີຫລາຍແຫ່ງ
ແລ້ວທ່ານທັງຫລາຍກໍເກັບນ້ຳໃນໜອງຕ່ຳ
10 ແລະທ່ານກໍນັບເຮືອນຂອງເຢຣູຊາເລັມ
ແລະພັງເຮືອນມາເສີມກຳແພງເມືອງ
11 ທ່ານເຮັດໜອງນ້ຳໄວ້ລະຫວ່າງກຳແພງທັງສອງເພື່ອຮັບນ້ຳຂອງໜອງເກົ່າ
ແຕ່ທ່ານບໍ່ໄດ້ເບິ່ງຜູ້ທີ່ໄດ້ເຮັດການນັ້ນ
ແລະບໍ່ໄດ້ເອົາໃຈໃສ່ຕໍ່ຜູ້ຊົງວາງແຜນງານນີ້ໄວ້ດົນມາແລ້ວ
12 ໃນມື້ນັ້ນ ອົງພຣະຜູ້ເປັນເຈົ້າພຣະເຈົ້າແຫ່ງຈັກກະວານເອີ້ນໃຫ້ຮ້ອງໄຫ້
ແລະຄ່ຳຄວນ ໃຫ້ມີຫົວໂລ້ນ ແລະໃຫ້ຄາດຕົວດ້ວຍຜ້າກະສອບ
13 ເບິ່ງແມ ມີຄວາມຊື່ນບານ ແລະຄວາມຍິນດີ ມີການຂ້າງົວ ແລະຂ້າແກະ
ມີການກິນຊີ້ນ ແລະດື່ມນ້ຳອະງຸ່ນ
"ໃຫ້ເຮົາກິນ ແລະດື່ມ ເພາະວ່າມື້ອື່ນນີ້ເຮົາຈະຕາຍ"
14 ພຣະຜູ້ເປັນເຈົ້າແຫ່ງຈັກກະວານໄດ້ສະແດງໃນຫູຂອງຂ້າພະເຈົ້າວ່າ
"ການກະທຳນີ້ຈະບໍ່ຍົກຄວາມຊົ່ວຊ້ານີ້ໃຫ້ເຈົ້າ ຈົນກວ່າເຈົ້າຈະຕາຍ"
ອົງພຣະຜູ້ເປັນເຈົ້າພຣະເຈົ້າແຫ່ງຈັກກະວານບອກດັ່ງນີ້

## ການພິພາກສາຕໍ່ເຊັບນາ

15ອົງພຣະຜູ້ເປັນເຈົ້າພຣະເຈົ້າແຫ່ງຈັກກະວານບອກດັ່ງນີ້ວ່າ "ໄປສາ ໄປຫາຜູ້ປົ່ນປົວຄົນນີ້
ຄືໄປຫາເຊັບນາ ຜູ້ເບິ່ງແຍງລາຊະສຳນັກ ແລະຈົ່ງເວົ້າກັບເຂົາວ່າ 16ເຈົ້າມີສິດອັນໃດໃນບ່ອນ
ນີ້ ແລະເຈົ້າມີໃຜຢູ່ບ່ອນນີ້ ເຈົ້າຈຶ່ງຂຸດຂຸມຝັງສົບບ່ອນນີ້ເພື່ອຕົວເຈົ້າເອງ ຄືຄົນຂຸດຂຸມຝັງສົບໃນ
ທີ່ສູງ ແລະສະຫລັກທີ່ຢູ່ສຳລັບຕົນເອງໃນຫີນ 17ເບິ່ງແມ ພຣະຜູ້ເປັນເຈົ້າຈະຖິ້ມເຈົ້າອອກໄປ
ໃຫ້ເປັນຊະເລີຍຢ່າງແຮງ ພຣະອົງຈະຈັບເຈົ້າໃຫ້ແໜ້ນ 18ແລະຈະກ້ຽວເຈົ້າເປັນມ້ວນ ແລະໂຍນ
ເຈົ້າເໝືອນຢ່າງໝາກບານໄປຍັງແຜ່ນດິນກວ້າງ ເຈົ້າຈະຕາຍຢູ່ຫັ້ນ ແລະຢູ່ຫັ້ນຈະມີລົດຮົບອັນ
ໃຫຍ່ຫລວງຂອງເຈົ້າ ເຈົ້າຜູ້ເປັນທີ່ເຮັດໃຫ້ອັບອາຍແກ່ເຮືອນນາຍຂອງເຈົ້າ 19ເຮົາຈະຊຸກເຈົ້າ
ອອກໄປຈາກຕຳແໜ່ງຂອງເຈົ້າ ແລະເຈົ້າຈະຖືກດຶງລົງມາຈາກໜ້າທີ່ຂອງເຈົ້າ
20ຢູ່ມາໃນມື້ນັ້ນ ເຮົາຈະເອີ້ນຜູ້ຮັບໃຊ້ຂອງເຮົາ ຄືເອລີຢາກິມ ລູກຊາຍຮິນກີຢາ 21ເຮົາຈະ

ເອົາເສື້ອຕຳແໜ່ງຂອງເຈົ້າມາໃສ່ໃຫ້ລາວ ແລະຈະເອົາຜ້າຄາດຂອງເຈົ້າຄາດລາວໄວ້ ແລະຈະ
ມອບ ອຳນາດປົກຄອງຂອງເຈົ້າໄວ້ໃນມືຂອງລາວ ລາວຈະເປັນດັ່ງພໍ່ແກ່ຊາວເຢຣູຊາເລັມ
ແລະແກ່ວົງວານຢູດາ [22]ເຮົາຈະວາງລູກກຸນແຈຂອງວັງດາວິດໄວ້ເທິງບ່າຂອງລາວ ລາວຈະ
ເປີດ ແລະບໍ່ມີຜູ້ໃດປິດ ລາວຈະປິດ ແລະບໍ່ມີຜູ້ໃດເປີດ [23]ເຮົາຈະຕອກລາວໄວ້ຄືຕອກຕະປູໃນ
ທີ່ໝັ້ນຄົງ ແລະລາວຈະເປັນບ່ອນນັ່ງທີ່ມີກຽດແກ່ວົງວານພໍ່ຂອງຕົນ [24]ພວກເຂົາທັງຫລາຍຈະ
ແຂວນໄວ້ເທິງຕົວລາວ ຊຶ່ງສະຫງ່າລາສີທັງໝົດຂອງວົງວານພໍ່ຂອງລາວ ລູກຫລານຜູ້ສືບເຊື້ອ-
ສາຍ ພາຊະນະນ້ອຍໆທຸກອັນ ຕັ້ງແຕ່ຖ້ວຍຈົນເຖິງໂອທັງໝົດ

[25]ພຣະຜູ້ເປັນເຈົ້າແຫ່ງຈັກກະວານບອກວ່າ ໃນມື້ນັ້ນຕະປູທີ່ປັກແໜ້ນຢູ່ຢ່າງໝັ້ນດີຈະຫລຸດ
ມັນຈະຖືກປໍ້າລົງແລະຕົກລົງມາ ແລະພາລະທີ່ຢູ່ເທິງນັ້ນຈະຖືກຕັດອອກ ເພາະວ່າພຣະຜູ້ເປັນ-
ເຈົ້າໄດ້ບອກໄວ້ແລ້ວ"

# ບົດທີ 23

## ພຣະໂອວາດກ່ຽວກັບເມືອງຕີເຣ ກັບເມືອງກິດຕິມ

1 ພຣະໂອວາດກ່ຽວກັບເມືອງຕີເຣ
ໂອ ບັນດາກຳປັ່ນແຫ່ງຕາຊິດຈົ່ງຄໍ່າຄວນ
ເພາະວ່າເມືອງນັ້ນຖືກທຳລາຍເສຍແລ້ວ ບໍ່ມີເຮືອນ ຫລືທ່າຈອດເຮືອ
ໃຫ້ພວກເຂົາທັງຫລາຍຮູ້ຈັກໃນແຜ່ນດິນກິດຕິມ
2 ໂອ ຊາວເກາະເອີຍ ຈົ່ງມິດຢູ່
ພວກພໍ່ຄ້າແຫ່ງເມືອງຊີໂດນທີ່ຜ່ານຂ້າມທະເລໄປ ໄດ້ເຮັດໃຫ້ເຈົ້າເຕັມບໍລິບູນ
3 ແລະຂ້າມນໍ້າໃຫຍ່ ລາຍໄດ້ຂອງເມືອງນັ້ນຄືເຂົ້າເມືອງຊີໂຮ
ເປັນຜົນເກັບກ່ຽວຂອງແມ່ນໍ້າ ເມືອງນັ້ນເປັນ ພໍ່ຄ້າຂອງບັນດາປະຊາຊາດ
4 ໂອຊີໂດນເອີຍ ຈົ່ງອັບອາຍ ເພາະວ່າທະເລໄດ້ເວົ້າແລ້ວ
ທີ່ກຳບັງອັນເຂັ້ມແຂງຂອງທະເລເວົ້າວ່າ "ຂ້ອຍບໍ່ໄດ້ປວດມົດລູກ
ຫລືຂ້ອຍບໍ່ໄດ້ເກີດລູກ ຂ້ອຍບໍ່ໄດ້ລ້ຽງດູຄົນໜຸ່ມ ຫລືບຳລຸງລ້ຽງຍິງພົມມະຈາລີ"
5 ພວກເຂົາທັງຫລາຍຮັບຂ່າວກ່ຽວກັບເອຢິບຢ່າງໃດ
ພວກເຂົາຈະແສນລະທົມຢູ່ດ້ວຍເມືອງຕີເຣແນວນັ້ນ
6 ຈົ່ງຂ້າມໄປຕາຊິດ ໂອ ຊາວເກາະເອີຍ ຈົ່ງຄໍ່າຄວນ
7 ນີ້ເປັນເມືອງທີ່ສະໜຸກສະໜານຂອງເຈົ້າທັງຫລາຍຫລື
ຊຶ່ງກຳເນີດມາແຕ່ບູຮານ ຊຶ່ງຕີນໄດ້ພາມັນໄປ ຕັ້ງຢູ່ໄກ
8 ຜູ້ໃດໄດ້ມຸ້ງໝາຍໄວ້ດັ່ງນີ້ດ້ວຍເມືອງຕີເຣຄືເມືອງທີ່ໃຫ້ມົງກຸດ
ຊຶ່ງບັນດາພໍ່ຄ້າຂອງມັນເປັນເຈົ້ານາຍ
ຊຶ່ງພວກນາຍຄ້າຂອງມັນເປັນຄົນມີກຽດຂອງໂລກ
9 ພຣະຜູ້ເປັນເຈົ້າແຫ່ງຈັກກະວານມຸ້ງໝາຍໄວ້

ເພື່ອຈະໃຫ້ຄວາມຈອງຫອງແຫ່ງສະຫງ່າລາສີທັງໝົດ
ເພື່ອໃຫ້ກຽດຂອງຜູ້ມີກຽດທັງໝົດໃນແຜ່ນດິນໂລກສິ້ນສຸດລົງ
10 ໂອ ລູກສາວແຫ່ງຕາຊິດເອີຍ ຈົ່ງຜ່ານແຜ່ນດິນຂອງເຈົ້າຂ້າມໄປເໝືອນແມ່ນໍ້າມັນ
ບໍ່ມີກຳລັງທີ່ຈະຂ້າມໄປ ອີກເລີຍ
11 ພຣະອົງຢຽດພຣະຫັດຂອງພຣະອົງເໜືອທະເລ
ພຣະອົງບັນດານໃຫ້ບັນດາລາຊະອານາຈັກສັ່ນສະເທືອນ
ພຣະຜູ້ເປັນເຈົ້າບັນຊາກ່ຽວກັບເລື່ອງເມືອງແຫ່ງການຄ້າ
ເພື່ອຈະທຳລາຍບ່ອນກຳບັງອັນເຂັ້ມແຂງຂອງມັນ
12 ແລະພຣະອົງບອກວ່າ “ໂອ ລູກສາວພົມມະຈາລີຜູ້ຖືກບີບບັງຄັບແຫ່ງຊີໂດນເອີຍ
ເຈົ້າຈະບໍ່ຊົມຊື່ນຍິນດີອີກ ຕໍ່ໄປ
ຈົ່ງລຸກຂຶ້ນຂ້າມໄປເມືອງກິດຕິມຢູ່ບ່ອນນັ້ນເຈົ້າກໍຈະບໍ່ມີຄວາມສະຫງົບ”
13ຈົ່ງເບິ່ງແຜ່ນດິນແຫ່ງຄົນຄັນເດອາ ຊົນຊາດນີ້ຍັງບໍ່ມີຂຶ້ນມາ ຈົນກວ່າຄົນອັດຊີເຣຍສະ-
ຖາປະນາແຜ່ນດິນນັ້ນໄວ້ ສຳລັບຄົນທີ່ອາໄສຢູ່ຕາມຖິ່ນແຫ້ງແລ້ງກັນດານ ພວກເຂົາໄດ້ກໍ່ຫໍ-
ຄອຍຂອງຕົນຂຶ້ນ ພວກເຂົາກໍ່ວັງ ທັງຫລາຍຂອງຕົນຂຶ້ນ ແຕ່ພວກເຂົາເອງເຮັດໃຫ້ມັນເປັນ
ບ່ອນເພພັງ
14 ໂອ ບັນດາກຳປັ່ນແຫ່ງຕາຊິດເອີຍ ຈົ່ງຄໍ່າຄວນ
ເພາະວ່າບ່ອນກຳບັງອັນເຂັ້ມແຂງຂອງເຈົ້າຖືກຖິ້ມແລ້ວ
15ຕໍ່ມາໃນມື້ນັ້ນ ເຂົາຈະລືມເມືອງຕີເຣເຈັດສິບປີ ຄືກັບອາຍຸຂອງກະສັດອົງດຽວ ເມື່ອຄົບ
ເຈັດສິບປີ ຕີເຣຈະຮ້ອງເພງເໝືອນຍ່າງຍິງໂສເພນີວ່າ
16 “ໂອ ຍິງໂສເພນີທີ່ເຂົາລືມແລ້ວ ຈົ່ງຈັບພິນຄູ່ຍ່າງໄປທົ່ວເມືອງ
ຈົ່ງບັນເລງເພງມ່ວນໆຮ້ອງເພງ ຫລາຍໆບົດ ເພື່ອເຂົາຈະລະນຶກເຖິງເຈົ້າໄດ້”
17ຕໍ່ມາເມື່ອຄົບເຈັດສິບປີ ພຣະຜູ້ເປັນເຈົ້າຈະມາຢ້ຽມຢາມເມືອງຕີເຣ ແລະເມືອງນັ້ນຈະກັບ
ໄປຮັບຈ້າງໃໝ່ ແລະຈະຫລິ້ນຊູ້ກັບບັນດາລາຊະອານາຈັກທັງໝົດເທິງພື້ນໂລກ 18ສິນຄ້າຂອງ
ມັນ ແລະຄ່າຈ້າງຂອງມັນຈະເປັນຂອງບໍລິສຸດຖວາຍແດ່ພຣະຜູ້ເປັນເຈົ້າ ຈະບໍ່ສະສົມໄວ້ ຫລື
ມິດງຽບໄວ້ ແຕ່ສິນຄ້າຂອງມັນຈະອຳນວຍອາຫານອັນອຸດົມ ແລະເສື້ອຜ້າງາມແກ່ບັນດາຜູ້ທີ່ຢູ່ຕໍ່
ພຣະພັກພຣະຜູ້ເປັນເຈົ້າ

# ບົດທີ 24

## ເມື່ອສະໄໝຄວາມທຸກຕ່າງໆຜ່ານໄປແລ້ວ ກໍຈະເກີດຍຸກແຫ່ງອານາຈັກຂອງພຣະເຈົ້າ

1 ເບິ່ງແມພຣະຜູ້ເປັນເຈົ້າຈະຖິ້ມໂລກໃຫ້ຮ້າງ ແລະເຮັດໃຫ້ວ່າງເປົ່າ
ພຣະອົງຈະຂວໍ້າແຜ່ນດິນໂລກ ແລະກະຈາຍຜູ້ອາໄສຂອງມັນອອກໄປ
2 ຕໍ່ປະໂລຫິດເປັນຢ່າງໃດ ກໍຈະເປັນຢ່າງນັ້ນກັບປະຊາຊົນ

ຕໍ່ນາຍເປັນຢ່າງໃດ ກໍຈະເປັນຢ່າງນັ້ນກັບຂ້າທາດ
ຕໍ່ນາຍຜູ້ຍິງເປັນຢ່າງໃດ ກໍຈະເປັນຢ່າງນັ້ນກັບສາວໃຊ້
ຕໍ່ຜູ້ຂາຍເປັນຢ່າງໃດ ກໍເປັນຢ່າງນັ້ນກັບຜູ້ຊື້
ຕໍ່ຜູ້ຢືມເປັນຢ່າງໃດ ກໍຈະເປັນຢ່າງນັ້ນກັບຜູ້ໃຫ້ຢືມ
ຕໍ່ຜູ້ໃຫ້ຢືມໂດຍຄິດດອກເບ້ຍເປັນຢ່າງໃດ
ກໍເປັນຢ່າງນັ້ນກັບຜູ້ຢືມໂດຍຄິດດອກເບ້ຍ
3 ແຜ່ນດິນນັ້ນຈະຖືກຖິ້ມຮ້າງ ແລະຖືກປຸ້ນໝົດ
ເພາະວ່າພຣະຜູ້ເປັນເຈົ້າໄດ້ກ່າວໄວ້ແລ້ວ
4 ໂລກກໍໄວ້ທຸກ ແລະຫ່ຽວແຫ້ງໄປ ໂລກກໍອ່ອນແອ
ແລະຫ່ຽວແຫ້ງ ຄົນສູງສັກຂອງໂລກກໍອ່ອນແອລົງເສຍ
5 ໂລກນີ້ມີມົນທິນຍ້ອນຜູ້ອາໄສໃນນັ້ນ
ເພາະວ່າພວກເຂົາທັງຫລາຍລະເມີດຕໍ່ກົດໝາຍ
ໄດ້ຝ່າຝືນກົດ ໄດ້ຫັກພັນທະສັນຍາອັນຕະຫລອດໄປເປັນນິດນັ້ນ
6 ເຫດສັນນັ້ນ ຄຳສາບແຊ່ງກໍກືນໂລກ ແລະຜູ້ທີ່ອາໄສໃນນັ້ນກໍໂດດດ່ຽວ
ຜູ້ອາໄສຂອງໂລກຈຶ່ງຖືກເຜົາຜານ ແລະມີຄົນເຫລືອໜ້ອຍ
7 ນ້ຳອະງຸ່ນໃໝ່ກໍໄວ້ທຸກ ເຄືອອະງຸ່ນກໍອ່ອນແອ
ຈິດໃຈທີ່ຊື່ນບານທັງປວງກໍຖອນລົມຫັນໃຈ
8 ສຽງສະໜຸກສະໜານຂອງກອງກໍງຽບ ສຽງຂອງຜູ້ເບີກບານກໍຢຸດ
ສຽງສະໜຸກສະໜານຂອງພິນຄູ່ກໍງຽບ
9 ພວກເຂົາຈະບໍ່ດື່ມເຫລົ້າອະງຸ່ນພ້ອມກັບການຮ້ອງເພງອີກ
ເຫລົ້າກໍຈະເປັນຂອງຂົມແກ່ຜູ້ທີ່ດື່ມ
10 ເມືອງທີ່ຮ້າງເປົ່າຈົນແຕກຫັກເສຍແລ້ວ
ບ້ານທຸກຫລັງກໍປິດໝົດ ບໍ່ໃຫ້ໃຜເຂົ້າໄປ
11 ມີສຽງຮ້ອງຢູ່ກາງຖະໜົນດ້ວຍເລື່ອງເຫລົ້າອະງຸ່ນ
ຄວາມຊື່ນບານທັງໝົດກໍເຢັນລົງແລ້ວ ຄວາມຍິນດີຂອງແຜ່ນດິນກໍສູນຫາຍໄປ
12 ເຫລືອຄວາມຮ້າງເປົ່າຢູ່ໃນເມືອງ ປະຕູເມືອງກໍຖືກທຸບທຳລາຍ
13 ເພາະວ່າຈະເປັນຢູ່ທ່າມກາງແຜ່ນດິນ ທ່າມກາງຊົນຊາດທັງຫລາຍ
ຄືກັບຕົ້ນໝາກກອກເຫດຖືກສັ່ນ ຄືເມື່ອການເກັບເລັມຕາມເຄືອອະງຸ່ນໝົດລົງ
14 ພວກເຂົາທັງຫລາຍຈະເປັ່ງສຽງຂອງຕົນຂຶ້ນ
ຈະຮ້ອງເພງສະຫລອງຄວາມຍິ່ງໃຫຍ່ຂອງພຣະຜູ້ເປັນເຈົ້າ
ພວກເຂົາຈະໂຫ່ຮ້ອງຈາກທະເລ
15 ເຫດສັນນັ້ນ ໃນຮຸ່ງອາລຸນຈົ່ງຖວາຍສະຫງ່າລາສີແດ່ພຣະຜູ້ເປັນເຈົ້າ
ໃນເກາະທັງຫລາຍແຫ່ງທະເລ

ຈົ່ງຖວາຍແດ່ພຣະນາມແຫ່ງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງ ອິສຣາເອນ

## ຄວາມທຸກເວດທະນາອັນໃຫຍ່

16-17 ຕັ້ງແຕ່ທີ່ສຸດປາຍໂລກເຮົາໄດ້ຍິນສຽງເພງສັນລະເສີນວ່າ
ສະຫງ່າລາສີຈົ່ງມີແດ່ຜູ້ຊອບທຳ ແຕ່ຂ້າພະເຈົ້າກ່າວວ່າ
"ຂ້າພະເຈົ້າກໍຈ່ອຍຜອມ ຂ້າພະເຈົ້າກໍຈ່ອຍຜອມ ວິບັດແກ່ຂ້າພະເຈົ້າ
ເພາະວ່າຄົນທໍລະຍົດປະພຶດຢ່າງທໍລະຍົດ ຄົນທໍລະຍົດກໍປະພຶດຢ່າງທໍລະຍົດ"
18 ຕໍ່ມາ ຜູ້ໃດໜີເມື່ອໄດ້ຍິນສຽງຄວາມຢ້ານກົວນັ້ນ ຈະຕົກໃນຂຸມ
ແລະຜູ້ທີ່ປີນອອກມາຈາກຂຸມກໍຈະຕິດແຮ້ວ
ເພາະວ່າປ່ອງຢ້ຽມຂອງຟ້າສະຫວັນກໍຖືກເປີດ
ແລະຮາກຖານຂອງແຜ່ນດິນໂລກກໍຫວັ່ນໄຫວ
19 ໂລກແຕກມຸ່ນໄປໝົດແລ້ວ ໂລກແຕກເປັນປ່ຽງໆໂລກຖືກສັ່ນຢ່າງຮຸນແຮງ
20 ໂລກກໍຈະໂຊເຊໄປເໝືອນຢ່າງຄົນເມົາ ມັນຈະແກວ່ງໄປເໝືອນຢ່າງໄຟ
ການລະເມີດຂອງໂລກຈະໜັກຢູ່ເທິງມັນ ແລະມັນຈະລົ້ມ ແລະຈະບໍ່ລຸກອີກ
21 ຕໍ່ມາໃນມື້ນັ້ນພຣະຜູ້ເປັນເຈົ້າຈະລົງໂທດບໍລິວານຂອງຟ້າສະຫວັນໃນຟ້າສະຫວັນ
ແລະບັນດາກະສັດຂອງແຜ່ນດິນໂລກໃນແຜ່ນດິນໂລກ

## ການເປັນຂຶ້ນມາຈາກຄວາມຕາຍເທື່ອທຳອິດ

22 ພວກເຂົາທັງຫລາຍຈະຖືກຮອບຮອມໄວ້ນຳກັນ ເໝືອນດັ່ງນັກໂທດໃນຄຸກມືດ
ພວກເຂົາຈະຖືກກັກຂັງໄວ້ໃນຄຸກ ແລະຕໍ່ມາຫລາຍມື້ ຈຶ່ງຈະຖືກລົງໂທດ
23 ແລ້ວດວງເດືອນຈະຫ່ຽວແຫ້ງໄປ ແລະຕາເວັນຈະອັບອາຍ
ເພາະວ່າ ພຣະຜູ້ເປັນເຈົ້າ ແຫ່ງຈັກກະວານຈະປະທັບເທິງພູເຂົາຊີໂອນ
ແລະໃນ ເຢຣູຊາເລັມ ສະຫງ່າລາສີຈະປາກົດຕໍ່ໜ້າພວກຜູ້ໃຫຍ່ຂອງພຣະອົງ

# ບົດທີ 25

## ການມີໄຊໃນຍຸກແຫ່ງອານາຈັກຂອງພຣະເຈົ້າ

1 ຂ້າແດ່ ພຣະຜູ້ເປັນເຈົ້າ ພຣະອົງເປັນ ພຣະເຈົ້າ ຂອງຂ້າພະອົງ
ຂ້າພະອົງຈະຍົກພຣະກຽດພຣະອົງ ຂ້າພະອົງຈະສັນລະເສີນພຣະນາມຂອງພຣະອົງ
ເພາະວ່າພຣະອົງໄດ້ຊົງກະທຳການອັດສະຈັນ
ແຜນງານທີ່ພຣະອົງດຳລິໄວ້ດົນມາແລ້ວກໍສັດຊື່ ແລະເປັນຄວາມຈິງ
2 ເພາະວ່າພຣະອົງໄດ້ກະທຳໃຫ້ເມືອງເປັນກອງຂີ້ເຫຍື້ອ
ເມືອງມີປ້ອມເປັນບ່ອນເພພັງ ວັງຂອງຊົນຕ່າງດ້າວບໍ່ເປັນເມືອງຕໍ່ໄປອີກ
ຈະບໍ່ກໍ່ສ້າງຂຶ້ນອີກເລີຍ
3 ເຫດສັນນັ້ນ ປະຊາຊາດທີ່ແຂງແຮງຈະຖວາຍສະຫງ່າລາສີແດ່ພຣະອົງ
ຫົວເມືອງຂອງບັນດາປະຊາຊາດທີ່ທາລຸນ ຈະຢ້ານຢຳເກງພຣະອົງ

4 ເພາະວ່າພຣະອົງໄດ້ເປັນທີ່ກຳບັງອັນເຂັ້ມແຂງຂອງຄົນທຸກຍາກ
ເປັນທີ່ກຳບັງອັນເຂັ້ມແຂງຂອງຄົນຂັດສົນເມື່ອລາວທຸກໃຈ
ເປັນທີ່ກຳບັງຈາກພະຍຸ ແລະເປັນຮົ່ມກັນຄວາມຮ້ອນ
ເມື່ອລົມຂອງຜູ້ທີ່ທາລຸນກໍຄືພະຍຸພັດກຳແພງ
5 ຄືຄວາມຮ້ອນໃນທີ່ແຫ້ງແລ້ງ ພຣະອົງຈະລະງັບສຽງຂອງຄົນຕ່າງດ້າວ
ຮົ່ມເມກລະງັບຄວາມຮ້ອນສັນໃດ ກິ່ງຂອງຜູ້ທາລຸນກໍຈະຖືກຕັດລົງສັນນັ້ນ
6 ເທິງພູເຂົານີ້ພຣະຜູ້ເປັນເຈົ້າ ແຫ່ງຈັກກະວານຈະຈັດງານລ້ຽງ
ສຳລັບບັນດາຊົນຊາດທັງຫລາຍ ເປັນງານລ້ຽງດ້ວຍຂອງທີ່ມີນ້ຳມັນ
ເປັນງານລ້ຽງດ້ວຍນ້ຳອະງຸ່ນທີ່ຕອງແລ້ວ
ດ້ວຍຂອງຕຸ້ຍພີທີ່ມີໄຂມັນໃນກະດູກເຕັມ ດ້ວຍນ້ຳອະງຸ່ນທີ່ຕອງແລ້ວ
7 ແລະເທິງພູເຂົານີ້ ພຣະອົງຈະທຳລາຍຜ້າປົກໜ້າ
ຊຶ່ງປົກໜ້າບັນດາຊົນຊາດທັງຫລາຍ ແລະຜ້າກັ້ງຊຶ່ງກາງຢູ່ເໜືອບັນດາປະຊາຊາດ
8 ພຣະອົງຈະກືນຄວາມຕາຍດ້ວຍການມີໄຊ ແລະອົງພຣະຜູ້ເປັນເຈົ້າ
ພຣະເຈົ້າຈະເຊັດນ້ຳຕາຈາກໜ້າທັງປວງ
ແລະພຣະອົງຈະເອົາການໝິ່ນປະໝາດຊົນຊາດຂອງພຣະອົງໄປຈາກທົ່ວແຜ່ນດິນໂລກ
ເພາະວ່າພຣະຜູ້ເປັນເຈົ້າໄດ້ບອກໄວ້ແລ້ວ
9 ໃນມື້ນັ້ນ ພວກເຂົາຈະກ່າວກັນວ່າ
"ເບິ່ງແມ ນີ້ຄືພຣະເຈົ້າຂອງເຮົາທັງຫລາຍ ເຮົາໄດ້ຄອຍຖ້າພຣະອົງ
ເພື່ອວ່າ ພຣະອົງຈະຊ່ວຍເຮົາໃຫ້ລອດພົ້ນ ນີ້ຄືພຣະຜູ້ເປັນເຈົ້າ
ເຮົາໄດ້ລໍຄອຍຖ້າພຣະອົງ ໃຫ້ເຮົາຍິນດີແລະຊົມຊື່ນຍິນດີໃນຄວາມພົ້ນຂອງພຣະອົງ"
10 ເພາະວ່າພຣະຫັດຂອງພຣະຜູ້ເປັນເຈົ້າຈະພັກຢູ່ເທິງພູເຂົານີ້
ແລະໂມອາບຈະຖືກຢຽບຢ່ຳລົງພາຍໃຕ້ພຣະອົງ ຄືຢຽບລົງໃນຂຸມຂີ້ສັດ
11 ພຣະອົງຈະກາງພຣະຫັດຂອງພຣະອົງທ່າມກາງພວກເຂົາ
ເໝືອນດັ່ງຄົນລອຍນ້ຳກາງມືລອຍນ້ຳ ແລະພຣະອົງຈະໃຫ້
ຄວາມຈອງຫອງຂອງພວກເຂົາຕ່ຳລົງພ້ອມກັບສີມືຊຳນານຂອງພວກເຂົາ
12 ປ້ອມສູງຂອງກຳແພງເມືອງຂອງເຈົ້ານັ້ນ ພຣະອົງຈະໃຫ້ຕ່ຳລົງ
ຊົງວາງລົງ ແລະຖິ້ມລົງເຖິງດິນ ແມ່ນແຕ່ເຖິງຂີ້ຝຸ່ນດິນ

# ບົດທີ 26

## ເພງຂອງຜູ້ທີ່ລອດພົ້ນແລ້ວໃນຍຸກແຫ່ງອານາຈັກຂອງພຣະເຈົ້າ

1ໃນມື້ນັ້ນ ພວກເຂົາຈະຮ້ອງເພງນີ້ໃນແຜ່ນດິນຢູດາ
"ເຮົາມີເມືອງເຂັ້ມແຂງເມືອງໜຶ່ງ
ພຣະເຈົ້າຈະຕັ້ງຄວາມພົ້ນໄວ້ເປັນກຳແພງ ແລະປ້ອມປ້ອງກັນ

2 ຈົ່ງເປີດປະຕູເມືອງແມ
ເພື່ອປະຊາຊາດທີ່ຊອບທຳຊຶ່ງຮັກສາຄວາມຈິງໄວ້ຈະໄດ້ເຂົ້າມາ
3 ໃຈທີ່ເພິ່ງພາໃນພຣະອົງນັ້ນ ພຣະອົງຊົງຮັກສາໄວ້ໃນສັນຕິສຸກອັນສົມບູນ
ເພາະວ່າພວກເຂົາວາງໃຈໃນພຣະອົງ
4 ຈົ່ງວາງໃຈໃນ ພຣະຜູ້ເປັນເຈົ້າ ເປັນນິດ
ເພາະວ່າ ພຣະຜູ້ເປັນເຈົ້າ ຄື ພຣະຜູ້ເປັນເຈົ້າ ເປັນພຣະກຳລັງນິລັນດອນ
5 ເພາະວ່າພຣະອົງໃຫ້ຊາວເມືອງທີ່ສູງສົ່ງນັ້ນ ຕໍ່າລົງ
ພຣະອົງໃຫ້ມັນຕໍ່າລົງ ພຣະອົງໃຫ້ມັນຕໍ່າລົງ ຕໍ່າລົງເຖິງດິນ
ພຣະອົງໃຫ້ມັນລົງເຖິງຂີ້ຝຸ່ນດິນ
6 ຕີນຢຽບມັນ ຄືຕີນຂອງຄົນທຸກຍາກ ຄືຕີນຂອງຄົນຂັດສົນ”
7 ຫົນທາງຂອງຄົນຊອບທຳກໍກ້ຽງດີ
ພຣະອົງຜູ້ທ່ຽງທຳຊົງເຮັດໃຫ້ຫົນທາງຂອງຄົນຍຸດຕິທຳກ້ຽງດີ
8 ຂ້າແດ່ ພຣະຜູ້ເປັນເຈົ້າ ຂ້າພະອົງທັງຫລາຍຄອຍຖ້າພຣະອົງຢູ່
ໃນວິທີທາງແຫ່ງຄຳຕັດສິນຂອງພຣະອົງ ພຣະນາມອັນເປັນທີ່ລະນຶກຂອງພຣະອົງ
ເປັນສິ່ງທີ່ຈິດວິນຍານຂອງຂ້າພະອົງປາດຖະໜາ
9 ຈິດໃຈຂອງຂ້າພະອົງຢາກໄດ້ພຣະອົງໃນກາງຄືນ
ຈິດວິນຍານພາຍໃນຂ້າພະອົງສະແຫວງຫາພຣະອົງຢ່າງຮ້ອນຮົນ
ເພາະວ່າເມື່ອຄຳຕັດສິນຂອງພຣະອົງຢູ່ໃນແຜ່ນດິນໂລກ
ຊາວໂລກຈະໄດ້ຮຽນຮູ້ເຖິງຄວາມຊອບທຳ
10 ຖ້າສະແດງ ພຣະເຈົ້າ ແກ່ຄົນຊົ່ວ ພວກເຂົາກໍຈະບໍ່ຮຽນຮູ້ຄວາມຊອບທຳ
ພວກເຂົາຈະປະພຶດຢ່າງບໍ່ຍຸດຕິທຳໃນແຜ່ນດິນທີ່ທ່ຽງທຳ
ແລະຈະເບິ່ງບໍ່ເຫັນຄວາມຍິ່ງໃຫຍ່ຂອງ ພຣະຜູ້ເປັນເຈົ້າ
11 ຂ້າແດ່ ພຣະຜູ້ເປັນເຈົ້າ ເມື່ອພຣະຫັດຂອງພຣະອົງຍົກຂຶ້ນ ພວກເຂົາກໍຈະເບິ່ງບໍ່ເຫັນ
ແຕ່ຈະເບິ່ງເຫັນ ແລະຈະໄດ້ອັບອາຍ
ເພາະວ່າພວກເຂົາມີຄວາມອິດສາຕໍ່ຊົນຊາດຂອງພຣະອົງ
ໄຟແຫ່ງພວກສັດຕູຂອງພຣະອົງຈະເຜົາຜານພວກເຂົາເສຍ
12 ຂ້າແດ່ ພຣະຜູ້ເປັນເຈົ້າ ພຣະອົງຈະສະຖາປະນາສັນຕິສຸກເພື່ອຂ້າພະອົງທັງຫລາຍ
ເພາະວ່າພຣະອົງໄດ້ຊົງກະທຳບັນດາກິດຈະການຂອງພຣະອົງເພື່ອຂ້າພະອົງຄືກັນ
13 ຂ້າແດ່ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງຂ້າພະອົງ
ເຈົ້ານາຍອື່ນນອກເໜືອພຣະອົງໄດ້ປົກຄອງພວກຂ້າພະອົງ
ແຕ່ຂ້າພະອົງຈະກ່າວເຖິງພຣະນາມຂອງພຣະອົງເທົ່ານັ້ນ
14 ພວກເຂົາທັງຫລາຍຕາຍແລ້ວ ພວກເຂົາຈະບໍ່ມີຊີວິດອີກ
ພວກເຂົາເປັນຊາວແດນຄົນຕາຍ ແລະຈະບໍ່ເປັນຂຶ້ນອີກ

ເຫດສະນັ້ນ ພຣະອົງໄດ້ມາຢ້ຽມຢາມ ແລະທຳລາຍພວກເຂົາ
ແລະຊົງກວາດຄວາມລະນຶກເຖິງພວກເຂົາທັງໝົດໄປ
15 ຂ້າແດ່ພຣະຜູ້ເປັນເຈົ້າ ແຕ່ພຣະອົງເພີ່ມເຕີມປະຊາຊົນຂຶ້ນ
ພຣະອົງເພີ່ມເຕີມປະຊາຊົນຂຶ້ນ ພຣະອົງໄດ້ຮັບສະຫງ່າລາສີ
ພຣະອົງຂະຫຍາຍເຂດແດນຂອງແຜ່ນດິນໄກໄປເຖິງທີ່ສຸດປາຍແຜ່ນດິນໂລກ
16 ຂ້າແດ່ພຣະຜູ້ເປັນເຈົ້າ ໃນຍາມທຸກໃຈ ພວກເຂົາໄດ້ສະແຫວງຫາພຣະອົງ
ພວກເຂົາທັງຫລາຍຫລັ່ງຄຳອະທິຖານອອກມາ
ໃນຂະນະທີ່ການຕີສອນຢູ່ເໜືອພວກເຂົາທັງຫລາຍ
17 ດັ່ງຍິງມີລູກ ຜູ້ບິດຕົວ ແລະຮ້ອງດ້ວຍຄວາມເຈັບປວດ
ເມື່ອນາງໃກ້ຈະເຖິງກຳນົດເກີດ ຂ້າແດ່ພຣະຜູ້ເປັນເຈົ້າ
ຂ້າພະອົງທັງຫລາຍກໍເປັນເຊັ່ນນັ້ນໃນສາຍຕາຂອງພຣະອົງ
18 ຂ້າພະອົງມີລູກ ຂ້າພະອົງບິດຕົວ ຄືກັບຂ້າພະອົງເກີດລົມ
ຂ້າພະອົງບໍ່ໄດ້ເຮັດການຊ່ວຍໃຫ້ພົ້ນໃນແຜ່ນດິນໂລກ
ແລະຊາວໂລກບໍ່ໄດ້ລົ້ມລົງ
19 ຄົນຕາຍຂອງພຣະອົງຈະມີຊີວິດ
ສົບຂອງພວກເຂົາທັງຫລາຍຈະລຸກຂຶ້ນ ພ້ອມກັບສົບຂອງຂ້າພະອົງ
ໂອ ຜູ້ອາໄສຢູ່ໃນຂີ້ຝຸ່ນດິນ ຈົ່ງຕື່ນເຖີດ
ແລະຮ້ອງເພງ ເພາະວ່ານ້ຳໝອກຂອງເຈົ້າເປັນຄືກັບນ້ຳໝອກເທິງຜັກ
ແລະແຜ່ນດິນໂລກຈະໃຫ້ຊາວແດນຄົນຕາຍເປັນຂຶ້ນມາ

### ອິສຣາເອນພົບບ່ອນລີ້ໄພໃນຍຸກແຫ່ງຄວາມທຸກເວດທະນາອັນໃຫຍ່

20 ມາທ້ອນ ຊົນຊາດຂອງຂ້າພະເຈົ້າເອີຍ ຈົ່ງເຂົ້າໃນຫ້ອງຂອງເຈົ້າ
ແລະປິດປະຕູ ຈົ່ງເຊື່ອງຕົວເຈົ້າຢູ່ຄາວໜຶ່ງ ຈົນກວ່າພຣະພິໂລດຈະຜ່ານໄປ
21 ເພາະວ່າ ເບິ່ງແມພຣະຜູ້ເປັນເຈົ້າກຳລັງສະເດັດອອກມາຈາກສະຖານທີ່ຂອງພຣະອົງ
ເພື່ອລົງໂທດຊາວແຜ່ນດິນໂລກ ເພາະວ່າຄວາມຊົ່ວຊ້າຂອງພວກເຂົາທັງຫລາຍ
ແລະແຜ່ນດິນໂລກຈະເປີດເຜີຍເລືອດຊຶ່ງຫລັ່ງຢູ່ເທິງມັນ
ແລະຈະບໍ່ປິດບັງຜູ້ຖືກຂ້າຂອງມັນໄວ້ອີກ

## ບົດທີ 27

### ອິສຣາເອນຈະຖືກຮວບຮວມກັນອີກ

1ໃນມື້ນັ້ນ ພຣະຜູ້ເປັນເຈົ້າຈະລົງໂທດດ້ວຍພຣະແສງອັນແຂງກະດ້າງ ອັນໃຫຍ່ ແລະອັນ
ແຮງກ້າຂອງພຣະອົງຕໍ່ເລວີອາທັນ ຄືພະຍານາກທີ່ໜີໄປນັ້ນ ເລວີອາທັນພະຍານາກທີ່ຂົດ
ແລະພຣະອົງຈະປະຫານມັງກອນທີ່ຢູ່ໃນທະເລ
2ໃນມື້ນັ້ນ ຈົ່ງຮ້ອງເພງວ່າ

"ສວນອະງຸ່ນແຫ່ງນ້ຳອະງຸ່ນສີແດງ
3 ເຮົາຄືພຣະຜູ້ເປັນເຈົ້າເປັນຜູ້ປົ່ນປົວເບິ່ງແຍງມັນ ເຮົາຈະຫົດນ້ຳມັນຢູ່ທຸກເວລາ
ຢ້ານວ່າຜູ້ໜຶ່ງຜູ້ໃດຈະເຮັດອັນຕະລາຍແກ່ມັນ
ເຮົາຈະຮັກສາມັນໄວ້ທັງກາງຄືນກາງເວັນ
4 ເຮົາບໍ່ມີຄວາມໂກດຮ້າຍ ໃຜຈະໃຫ້ມີໜາມຍ່ອຍໜາມໃຫຍ່ຂຶ້ນມາສູ້ຮົບກັບເຮົາ
ເຮົາຈະອອກຮົບກັບມັນ ເຮົາຈະເຜົາມັນນຳກັນ
5 ຫລືໃຫ້ພວກເຂົາເກາະຢູ່ກັບກຳລັງຂອງເຮົາ
ເພື່ອໃຫ້ພວກເຂົາເຮັດສັນຕິພາບກັບເຮົາ ແລ້ວພວກເຂົາຈະເຮັດສັນຕິພາບກັບເຮົາ"
6 ພຣະອົງຈະເຮັດໃຫ້ຄົນທີ່ອອກມາຈາກຢາໂຄບຈໍ່ຮາກ
ອິສຣາເອນຈະປົ່ງດອກ ແລະແຕກໜໍ່ ເຮັດໃຫ້ພື້ນ ໂລກທັງໝົດມີຜົນລະປູກເຕັມ
7 ພຣະອົງຈະຊົງຊ້ຽນຕີພວກເຂົາເໝືອນຢ່າງທີ່ຊົງຊ້ຽນຕີສັດຕູທີ່ຊ້ຽນຕີພວກເຂົາບໍ?
ຫລືພວກເຂົາຈະຖືກຂ້າເໝືອນຢ່າງຄົນທັງຫລາຍທີ່ຖືກພວກເຂົາຂ້າແລ້ວ
8 ດ້ວຍການຂັບໄລ່ ດ້ວຍການກວາດໄປເປັນຊະເລີຍ ພຣະອົງຕໍ່ສູ້ກັບພວກເຂົາ
ພຣະອົງກວາດພວກເຂົາໄປດ້ວຍ ລົມແດງຂອງພຣະອົງໃນມື້ແຫ່ງລົມຕາເວັນອອກ
9 ເຫດສະນັ້ນ ຈະລຶບລ້າງຄວາມຊົ່ວຊ້າຂອງຢາໂຄບດ້ວຍຢ່າງນີ້ແຫລະ
ແລະເປັນຜົນລະປູກເຕັມຂະໜາດໃນການປົດບາບຂອງພວກເຂົາ
ຄືເມື່ອພວກເຂົາເຮັດຫີນທັງໝົດຂອງແທ່ນບູຊາໃຫ້ເປັນຄືກັບສໍຂາວທີ່ຖືກບົດເປັນຕ່ອນໆ
ຈະບໍ່ມີເສົາຮູບເຄົາລົບ ຫລືຮູບເຄົາລົບຕັ້ງຢູ່ໄດ້ອີກ
10 ເພາະວ່າເມືອງທີ່ມີປ້ອມກໍຈະຢູ່ຢ່າງໂດດດ່ຽວ ບ່ອນອາໄສກໍຮ້າງເປົ່າ
ຖືກປະຖິ້ມຄືກັບຖິ່ນແຫ້ງແລ້ງກັນດານ ລູກງົວຈະຫາກິນຢູ່ຫັ້ນ
ມັນຈະນອນລົງຢູ່ຫັ້ນ ແລະກິນກິ່ງໄມ້
11 ເມື່ອກິ່ງນັ້ນແຫ້ງ ມັນກໍຈະຖືກຫັກ ພວກຜູ້ຍິງກໍມາເອົາມັນໄປດັງໄຟ
ເພາະວ່ານີ້ເປັນຊົນຊາດທີ່ບໍ່ມີຄວາມ ເຂົ້າໃຈ
ເຫດສັນນັ້ນ ຜູ້ທີ່ສ້າງພວກເຂົາກໍຈະບໍ່ສົງສານພວກເຂົາ
ຜູ້ທີ່ປັ້ນພວກເຂົາຈະບໍ່ສະແດງພຣະກະລຸນາແກ່ພວກເຂົາ
12ຕໍ່ມາໃນມື້ນັ້ນ ຕັ້ງແຕ່ແມ່ນ້ຳໄປຈົນຮອດລຳທານເອຢິບ ພຣະຜູ້ເປັນເຈົ້າຈະນວດເອົາເຂົ້າ,
ໂອ ປະຊາຊົນອິສຣາເອນເອີຍ ເຈົ້າຈະຖືກເກັບລວມເຂົ້າມາເທື່ອລະຄົນ 13ແລະຢູ່ມາໃນມື້ນັ້ນ
ພວກເຂົາຈະເປົ່າເຂົາສັດໃຫຍ່ ແລະບັນດາຜູ້ທີ່ກຳລັງພິນາດຈິບຫາຍຢູ່ໃນແຜ່ນດິນອັດຊີເຣຍ
ແລະບັນດາຜູ້ຖືກຂັບໄລ່ອອກໄປຍັງແຜ່ນດິນເອຢິບຈະມານະມັດສະການພຣະຜູ້ເປັນເຈົ້າ ເທິງ
ພູເຂົາບໍລິສຸດທີ່ເຢຣູຊາເລັມ

# ບົດທີ 28

1 ວິບັດແກ່ມົງກຸດອັນຈອງຫອງ ແກ່ຄົນຂີ້ເມົາແຫ່ງເອຟຣາຢິມ

ຊຶ່ງຄວາມງາມອັນຮຸ່ງເຮືອງຂອງພວກເຂົາເປັນ
ເໝືອນດອກໄມ້ທີ່ກຳລັງຫ່ຽວແຫ້ງຢູ່ເທິງຍອດພູອັນອຸ
ດົມໄປດ້ວຍບັນດາຜູ້ທີ່ເຫຼົ້າອະງຸ່ນມີໄຊເໜືອຕົນ.
2 ເບິ່ງແມ, ອົງພຣະຜູ້ເປັນເຈົ້າຊົງມີຜູ້ໜຶ່ງທີ່ມີກຳລັງ
ແລະແຂງແຮງເໝືອນດັ່ງພະຍຸໝາກເຫັບ, ອັນເປັນພະຍຸທຳລາຍ,
ເໝືອນພະຍຸນໍ້າທີ່ກຳລັງໄຫຼຖ້ວມ
ຊຶ່ງຊົງຟາດລົງເຖິງພື້ນດິນດ້ວຍພຣະຫັດ.
3 ມົງກຸດອັນຈອງຫອງ ຄືຄົນຂີ້ເມົາແຫ່ງເອຟຣາຢິມຈະຖືກຢຽບຢູ່ໃຕ້ຕີນ
4 ແລະຄວາມງາມອັນຮຸ່ງເຮືອງຂອງລາວ ຊຶ່ງຢູ່ເທິງຍອດພູເຂົາໃນບ່ອນອັນອຸດົມ
ຈະເປັນດອກໄມ້ທີ່ກຳລັງ ຫ່ຽວແຫ້ງ ຈະເປັນຄືກັບຜົນທຳອິດທີ່ສຸກກ່ອນລະດູຮ້ອນ
ເມື່ອຄົນເຫັນ ກໍກິນມັນເສຍ ພໍແຕ່ເຖິງມືຂອງເຂົາເທົ່ານັ້ນ
5 ໃນມື້ນັ້ນພຣະຜູ້ເປັນເຈົ້າແຫ່ງຈັກກະວານ ຈະເປັນມົງກຸດແຫ່ງສະຫງ່າລາສີ
ແລະເປັນມົງກຸດແຫ່ງຄວາມງາມແກ່ຄົນທີ່ເຫລືອຢູ່ແຫ່ງຊົນຊາດຂອງພຣະອົງ
6 ແລະເປັນວິນຍານແຫ່ງຄວາມຍຸດຕິທຳແກ່ຜູ້ນັ່ງພິພາກສາ
ແລະເປັນກຳລັງຂອງພວກເຫລົ່ານັ້ນທີ່ຫັນສົງຄາມກັບເສຍຢູ່ທີ່ປະຕູເມືອງ

## ເອຊາຢາເຕືອນຜູ້ປະກາດພຣະຄຳຂີ້ເຫລົ້າຂອງຢູດາ

7 ແມ່ນແຕ່ຜູ້ປະກາດພຣະຄຳ ແລະປະໂລຫິດກໍດື່ມເຫລົ້າຈົນເມົາໂຊເຊ
ພວກເຂົາດື່ມເຫລົ້າອະງຸ່ນ ແລະເຫລົ້າອື່ນຈົນລົ້ມລຸກຄຸກຄານ
ຜູ້ປະກາດພຣະຄຳໄດ້ດື່ມເຫລົ້າຈົນບໍ່ເຂົ້າໃຈນິມິດທີ່ມາຈາກພຣະເຈົ້າ
ແລະປະໂລຫິດກໍດື່ມຈົນບໍ່ສາມາດຕັດສິນຄວາມໄດ້.
8 ໂຕະຕັ່ງບ່ອນພວກເຂົານັ່ງເຮັດວຽກໄດ້ເປິເປື້ອນໄປດ້ວຍຮາກ
ບໍ່ມີບ່ອນສະອາດເຫລືອຢູ່ໃຫ້ເຫັນເລີຍ.
9 ພວກເຂົາໄດ້ເວົ້າກ່ຽວກັບຂ້າພະເຈົ້າວ່າ,
“ຄົນນີ້ຄິດວ່າຈະສອນໃຜ? ໃຜຕ້ອງການຄຳສອນຂອງລາວ?
ມັນດີສຳລັບເດັກນ້ອຍທີ່ພວມກິນນົມເທົ່ານັ້ນ!
10 ລາວພະຍາຍາມສອນພວກເຂົາເປັນຄຳໆເປັນແຖວໆແລະເປັນຂໍ້ໆ.”
11 ຖ້າພວກທ່ານບໍ່ຟັງຂ້າພະເຈົ້າ
ພຣະເຈົ້າກໍຈະໃຊ້ຄົນຕ່າງຊາດມາສອນພວກທ່ານດ້ວຍພາສາແປກໆ.
12 ພຣະອົງຊົງໃຫ້ພວກທ່ານທັງໝົດພັກຜ່ອນ ແລະຊົງເລົ້າໂລມໃຈ
ແຕ່ພວກທ່ານກໍຍັງບໍ່ຍອມເຊື່ອຟັງພຣະອົງ.
13 ດ້ວຍເຫດນີ້ພຣະຜູ້ເປັນເຈົ້າຈຶ່ງຈະສອນທ່ານເປັນຄຳໆ ເປັນແຖວໆ ແລະເປັນຂໍ້ໆ
ແລ້ວພວກທ່ານຈະຕຳສະດຸດ ແລະເຈັບຕົນທຸກບາດຢ່າງ ຈະຖືກບ້ວງແຮ້ວ
ແລະຖືກຈັບໄປ.

## ຫີນຮາກແກ້ວເທິງພູຊີໂອນ

14 ພວກເຈົ້າຜູ້ຈອງຫອງ
ຜູ້ປົກຄອງປະຊາຊົນໃນນະຄອນ ເຢຣູຊາເລັມ ເອີຍ ຈົ່ງຟັງ ພຣະຜູ້ເປັນເຈົ້າກ່າວ.
15 ພວກເຈົ້າເວົ້າອວດອ້າງວ່າໄດ້ເຮັດສັນຍາໄວ້ກັບຄວາມຕາຍ
ແລະໄດ້ຕົກລົງໄວ້ກັບແດນຄົນຕາຍແລ້ວ ໂດຍແນ່ໃຈວ່າ
ເມື່ອໄພພິບັດມາເຖິງ ມັນຈະບໍ່ທຳລາຍພວກເຈົ້າ
ເພາະພວກເຈົ້າອາໄສພວກຂີ້ຕົວະຫລອກລວງເປັນເຄື່ອງຊ່ອຍ.
16 ດັ່ງນີ້ແຫລະພຣະຜູ້ເປັນເຈົ້າຈຶ່ງຊົງກ່າວວ່າ,
"ເຮົາຈະຕັ້ງຮາກຖານອັນໝັ້ນຄົງແຂງແຮງໃສ່ພູຊີໂອນຈົ່ງຝັງຮາກແກ້ວໃສ່ໄວ້
ໃນຫີນນັ້ນຈະມີຄຳຂຽນໃສ່ວ່າ ຄົນທີ່ເຊື່ອຄືຜູ້ໝັ້ນຄົງ ແລະອົດທົນ.
17 ຄວາມຍຸດຕິທຳຈະເປັນສາຍແທກຮາກຖານ ແລະຄວາມສັດຊື່ເປັນສາຍຢັ່ງລົງໄປ
ແຕ່ພະຍຸໝາກເຫັບຈະກວາດເອົາຄວາມຕົວະທີ່ເຈົ້າອາໄສ
ແລະນໍ້າຈະຖ້ວມທຳລາຍແນວປ້ອງກັນຂອງເຈົ້າ."
18 ແລ້ວພັນທະສັນຍາຂອງເຈົ້າກັບຄວາມຕາຍຈະເປັນໂມຄະ
ແລະຂໍ້ຕົກລົງຂອງເຈົ້າກັບນາລົກຈະບໍ່ດຳລົງ
ເມື່ອໄພພິບັດອັນຖ້ວມລົ້ນຜ່ານໄປ ເຈົ້າຈະຖືກຢຽບຢໍ່າລົງດ້ວຍໂທດນັ້ນ
19 ມັນຜ່ານໄປເລື້ອຍເທົ່າໃດ ມັນກໍຈະເອົາຕົວເຈົ້າ
ເພາະວ່າມັນຈະຜ່ານໄປເຊົ້າແລ້ວເຊົ້າອີກ ທັງກາງເວັນ ແລະກາງຄືນ
ເມື່ອເຂົ້າໃຈຂ່າວ ກໍຈະເກີດແຕ່ຄວາມຢ້ານກົວເທົ່ານັ້ນ
20 ເພາະວ່າບ່ອນນອນນັ້ນກໍສັ້ນເກີນທີ່ຄົນໜຶ່ງຄົນໃດຈະຢຽດຢູ່ເທິງນັ້ນໄດ້
ແລະຜ້າຫົ່ມກໍແຄບບໍ່ພໍໂອບຕົວ
21 ເພາະວ່າພຣະຜູ້ເປັນເຈົ້າຈະລຸກຂຶ້ນຢ່າງເທິງພູເຂົາເປຣາຊິມ
ພຣະອົງຈະຊົງພຣະພິໂລດຄືຢູ່ໃນຮ່ອມພູເຂົາກີເບໂອນ
ເພື່ອປະຕິບັດພຣະລາຊະກິດຂອງພຣະອົງ ພຣະລາຊະກິດຂອງພຣະອົງນັ້ນປະຫລາດ
ແລະເພື່ອປະຕິບັດງານຂອງພຣະອົງ ງານຂອງພຣະອົງກໍແປກ
22 ເຫດສະນັ້ນ ບັດນີ້ຢ່າເປັນຄົນເຍາະເຍີ້ຍ
ຢ້ານວ່າໂສ້ຂອງພວກທ່ານຈະແນບແຂງກວ່າເກົ່າ ເພາະວ່າຂ້າພະເຈົ້າໄດ້ຍິນ
ແຕ່ອົງພຣະຜູ້ເປັນເຈົ້າພຣະເຈົ້າແຫ່ງຈັກກະວານມີຄວາມຈິບຫາຍໝາຍໄວ້ແລ້ວ
ເປັນຄວາມຈິບຫາຍ ເໜືອແຜ່ນດິນທັງໝົດ
23 ຈົ່ງຫງ່ຽງຫູລົງຟັງ ແລະຟັງສຽງຂ້າພະເຈົ້າ ຈົ່ງຕັ້ງໃຈຟັງ
ແລະຟັງຄຳເວົ້າຂອງຂ້າພະເຈົ້າ
24 ຜູ້ໄຖນາເພື່ອຫວ່ານ ຈະໄຖຢູ່ຕະຫລອດບໍ?
ລາວຈະພວນດິນ ແລະຄາດຢູ່ເປັນນິດບໍ?

25 ເມື່ອລາວເຮັດນາໃຫ້ພຽງແລ້ວ ລາວບໍ່ຫວ່ານງາດຳແລະງາຂາວ
ລາວບໍ່ໃສ່ເຂົ້າເດືອຍເປັນແຖວ ແລະເຂົ້າສາລີໃນບ່ອນອັນເໝາະສົມຂອງມັນ
ແລະຫວ່ານເຂົ້າໄວ້ເປັນຄັນນາ
26 ເພາະວ່າພຣະເຈົ້າຂອງລາວສັ່ງສອນລາວຢ່າງຖືກຕ້ອງ ພຣະອົງໄດ້ສອນລາວ
27 ລາວບໍ່ນວດງາດຳດ້ວຍເຄື່ອງນວດເຂົ້າ ແລະລາວບໍ່ເອົາລໍ້ກວຽນກິ້ງທັບງາຂາວ
ແຕ່ເອົາໄມ້ຄ້ອນຕີງາດຳໃຫ້ຫລຸດອອກ ແລະເອົາໄມ້ຄ້ອນຕີງາຂາວ
28 ຄົນໃດບົດເຂົ້າສຳລັບເຮັດເຂົ້າຈີ່ ລາວຈະບໍ່ນວດມັນເປັນນິດ
ເມື່ອລາວຂັບລໍ້ກວຽນທຽມມ້າທັບມັນແລ້ວ ລາວກໍບໍ່ໄດ້ບົດມັນດ້ວຍຄົນຂີ່ມ້າ
29 ເລື່ອງນີ້ມາຈາກພຣະຜູ້ເປັນເຈົ້າແຫ່ງຈັກກະວານດ້ວຍ
ພຣະອົງມະຫັດສະຈັນຫລາຍໃນການໃຫ້ຄຳປຶກສາ
ແລະວິເສດໃນເລື່ອງການປະຕິບັດ

# ບົດທີ 29

## ຄຳຕັກເຕືອນແກ່ຢູດາ ແລະເຢຣູຊາເລັມ

1 ວິບັດແກ່ອາຣີເອນອາຣີເອນນະຄອນຊຶ່ງດາວິດໄດ້ຕັ້ງຄ້າຍ
ຈົ່ງຕື່ມປີກັບປີ ຈົ່ງໃຫ້ມີເທດສະການຖວາຍເຄື່ອງບູຊາຕໍ່ໆໄປ
2 ເຮົາຍັງຈະໃຫ້ອາຣີເອນທຸກໃຈ ຈະມີການຮ້ອງຄ່ຳຄວນ
ແລະຮ້ອງທຸກ ແລະເມືອງນັ້ນຈະເປັນຄືກັບອາຣີເອນແກ່ເຮົາ
3 ເຮົາຈະຕັ້ງຄ້າຍຢູ່ອ້ອມເຈົ້າ ແລະເຮົາຈະປິດລ້ອມເຈົ້າກັບບັນດາປ້ອມທະຫານ
ແລະເຮົາຈະຍົກຂຶ້ນຕໍ່ສູ້ເຈົ້າ
4 ເຈົ້າຈະຖືກຢຽບລົງ ເຈົ້າຈະເວົ້າມາຈາກທີ່ເລິກຂອງແຜ່ນດິນໂລກ
ຄຳຂອງເຈົ້າຈະມາຈາກທີ່ຕ່ຳລົງໃນຂີ້ຝຸ່ນດິນ
ສຽງຂອງເຈົ້າຈະມາຈາກພື້ນດິນຄືສຽງຜີ
ແລະຄຳເວົ້າຂອງເຈົ້າຈະສື່ມອອກມາຈາກຂີ້ຝຸ່ນດິນ
5 ແຕ່ຊາວຕ່າງດ້າວຂອງເຈົ້າຈະຄືຂີ້ຝຸ່ນລະອຽດ
ແລະຄົນທັງປວງຈະເປັນຄືແກບທີ່ພັດປິວໄປ ຊົ່ວພັບຕາດຽວແລະໃນທັນທີທັນໃດ
6 ພຣະຜູ້ເປັນເຈົ້າແຫ່ງຈັກກະວານຈະຢ້ຽມຢາມເຈົ້າດ້ວຍຟ້າຮ້ອງ
ແລະດ້ວຍແຜ່ນດິນໄຫວ ແລະດ້ວຍສຽງປາກອັນດັງ ດ້ວຍລົມຫົວກຸດ ແລະພະຍຸ
ດ້ວຍແປວໄຟເຜົາຜານ
7 ປະຊາຊາດທັງໝົດທີ່ຕໍ່ສູ້ກັບອາຣີເອນທັງໝົດທີ່ຕໍ່ສູ້ກັບນາງ
ແລະກັບບ່ອນກຳບັງອັນເຂັ້ມແຂງຂອງນາງແລະເຮັດໃຫ້ນາງທຸກໃຈ
ຈະເປັນເໝືອນກັບຄວາມຝັນຄືນິມິດໃນກາງຄືນ
8 ຄືຄົນຫິວເຂົ້າກ່າວວ່າ ເບິ່ງແມ ລາວກຳລັງກິນຢູ່ ແລະຕື່ນຂຶ້ນກໍຍັງຫິວຢູ່

ຈິດໃຈລາວບໍ່ອີ່ມ ຫລືຄືຄົນກະຫາຍນໍ້າກ່າວວ່າ ເບິ່ງແມ ເຂົາກຳລັງດື່ມຢູ່
ແລ້ວຕື່ນຂຶ້ນມາ ເບິ່ງແມ ອ່ອນເພຍ ຈິດໃຈຂອງລາວຍັງແຫ້ງ
ປະຊາຊາດທັງໝົດທີ່ຕໍ່ສູ້ກັບພູເຂົາຊີໂອນກໍຈະເປັນເຊັ່ນນັ້ນ

## ພິທີການຕ່າງໆ ທາງສາດສະໜາເຮັດໃຫ້ພຣະເຈົ້າພໍພຣະໄທບໍ່ໄດ້

9 ຈົ່ງປະຫລາດໃຈ ແລະງົງຢູ່ ຈົ່ງຮ້ອງ ແລະຮ້ອງໄຫ້
ພວກເຂົາມືນເມົາ ແຕ່ບໍ່ແມ່ນດ້ວຍເຫລົ້າອະງຸ່ນ ພວກເຂົາໂຊເຊ
ແຕ່ບໍ່ແມ່ນດ້ວຍເຫລົ້າ
10 ເພາະວ່າພຣະຜູ້ເປັນເຈົ້າເທວິນຍານແຫ່ງຄວາມຫລັບສະໜິດລົງເໜືອເຈົ້າ
ແລະປິດຕາຂອງເຈົ້າ ແລະພຣະອົງບັງຕາຂອງພວກຜູ້ທຳນວຍ
ພວກເຈົ້ານາຍ ແລະພວກຜູ້ທຳນວາຍຂອງເຈົ້າ

11 ແກ່ທ່ານທັງຫລາຍ ນິມິດທັງໝົດນີ້ໄດ້ກາຍເປັນຄືກັບຖ້ອຍຄຳໃນໜັງສືເຫລັ້ມໜຶ່ງທີ່ມີຕາ
ປະທັບໄວ້ ຊຶ່ງເຂົາໃຫ້ແກ່ຄົນໜຶ່ງທີ່ອ່ານໄດ້ ກ່າວວ່າ “ອ່ານໜັງສືນີ້ແມ້” ລາວຕອບວ່າ “ຂ້ອຍ
ອ່ານບໍ່ໄດ້ ເພາະວ່າມີຕາປະທັບ” 12 ເມື່ອລາວໃຫ້ໜັງສືແກ່ຄົນໜຶ່ງທີ່ອ່ານບໍ່ໄດ້ ກ່າວວ່າ “ອ່ານ-
ໜັງສືນີ້ແມ້” ເຂົາຕອບວ່າ “ຂ້ອຍບໍ່ຮູ້ໜັງສື”

13 ແລະອົງພຣະຜູ້ເປັນເຈົ້າບອກວ່າ
“ເພາະວ່າຊົນຊາດນີ້ເຂົ້າມາໃກ້ເຮົາດ້ວຍປາກຂອງພວກເຂົາ
ແລະໃຫ້ກຽດເຮົາດ້ວຍສົບປາກຂອງຕົນ
ແຕ່ພວກເຂົາໃຫ້ຈິດໃຈຂອງຕົນເອງຫ່າງໄກຈາກເຮົາ
ພວກເຂົາຢຳເກງເຮົາພຽງແຕ່ເປັນຂໍ້ບັງຄັບຂອງມະນຸດທີ່ສອນກັນມາ
14 ເຫດສັນນັ້ນ ເບິ່ງແມ ເຮົາຈະກະທຳການອັດສະຈັນກັບຊົນຊາດນີ້ອີກ
ການປະຫລາດ ແລະອັດສະຈັນ
ສະຕິປັນຍາຂອງຄົນມີປັນຍາຂອງພວກເຂົາຈະຈິບຫາຍໄປ
ແລະຄວາມເຂົ້າໃຈຂອງຄົນທີ່ເຂົ້າໃຈຈະຖືກປິດບັງໄວ້”
15 ວິບັດແກ່ຜູ້ທີ່ພະຍາຍາມເຊື່ອງແຜນງານຂອງຕົນໄວ້ຈາກພຣະຜູ້ເປັນເຈົ້າ
ຊຶ່ງການກະທຳຂອງລາວຢູ່ໃນຄວາມມືດ ຜູ້ຊຶ່ງກ່າວວ່າ “ໃຜເຫັນເຮົາ ໃຜຈື່ເຮົາໄດ້”
16 ແນ່ນອນຄວາມຄິດໂກງຂອງເຈົ້າຈະຖືວ່າ ຊ່າງປັ້ນເທົ່າກັບດິນໜຽວ
ແລະສິ່ງທີ່ຖືກສ້າງຈະເວົ້າເລື່ອງຜູ້ສ້າງມັນວ່າ “ລາວບໍ່ໄດ້ສ້າງຂ້ອຍ”
ຫລືສິ່ງທີ່ຖືກປັ້ນຂຶ້ນຈະເວົ້າເລື່ອງຜູ້ປັ້ນມັນວ່າ
“ລາວບໍ່ມີຄວາມເຂົ້າໃຈອັນໃດເລີຍ” ແມ່ນຢ່າງນີ້ບໍ

## ອິສຣາເອນຈະໄດ້ຮັບພຣະພອນໃນອະນາຄົດ

17 ບໍ່ແມ່ນອີກໜ້ອຍດຽວເທົ່ານັ້ນບໍ ທີ່ເລບານອນຈະຖືກປ່ຽນໃຫ້ເປັນສວນໝາກໄມ້
ແລະສວນໝາກໄມ້ ຈະຖືວ່າເປັນປ່າ
18 ໃນມື້ນັ້ນ ຄົນຫູໜວກຈະໄດ້ຍິນຖ້ອຍຄຳຂອງໜັງສື

และຕາຂອງຄົນຕາບອດຈະເຫັນອອກມາຈາກຄວາມ ມືດຂອງຕົນ
19 ຄົນໃຈອ່ອນສຸພາບຈະໄດ້ຄວາມຊື່ນບານສົດໃສໃນ ພຣະຜູ້ເປັນເຈົ້າ ເພີ່ມເຕີມຂຶ້ນ
และຄົນທຸກຍາກທ່າມກາງມະນຸດຈະຊື່ນບານໃນອົງບໍລິສຸດແຫ່ງ ອິສຣາເອນ
20 ເພາະວ່າຜູ້ໜ້າຢ້ານຈະສູນໄປ และຄົນມັກເຍາະເຍີ້ຍຈະຖືກດັບສູນໄປ
และຄົນທັງປວງທີ່ຫາໂອກາດ ກະທຳຄວາມຊົ່ວຊ້າຈະຖືກຕັດຂາດເສຍ
21 ຄືຜູ້ທີ່ໃສ່ຄວາມຄົນອື່ນດ້ວຍຖ້ອຍຄຳຂອງຕົນ
และວາງບ້ວງແຮ້ວໄວ້ດັກຈັບຜູ້ກ່າວຄຳຕິຕຽນທີ່ປະຕູເມືອງ
และດ້ວຍຖ້ອຍຄຳທີ່ບໍ່ເປັນແກ່ນສານ ລາວຂັດຂວາງຄົນຊອບທຳ
22ເຫດສັນນັ້ນ ພຣະຜູ້ເປັນເຈົ້າ ຜູ້ໄຖ່ອັບຣາຮາມ ບອກດັ່ງນີ້ກ່ຽວກັບວົງວານຂອງ ຢາໂຄບ
ວ່າ

"ຢາໂຄບ ຈະບໍ່ຕ້ອງອັບອາຍອີກ ໜ້າຂອງລາວຈະບໍ່ຈືດລົງອີກຕໍ່ໄປ
23 ເພາະວ່າ ເມື່ອລາວເຫັນລູກຫລານຂອງລາວ
ຊຶ່ງເປັນຜົນງານແຫ່ງມືຂອງເຮົາໃນໝູ່ພວກເຂົາ
ພວກເຂົາທັງຫລາຍຈະຖືວ່ານາມຂອງເຮົາບໍລິສຸດ
ພວກເຂົາທັງຫລາຍຈະຖືວ່າອົງບໍລິສຸດຂອງ ຢາໂຄບ ບໍລິສຸດ
และຈະຢຳເກງ ພຣະເຈົ້າ ແຫ່ງ ອິສຣາເອນ
24 และບັນດາຜູ້ທີ່ຜິດຝ່າຍຈິດໃຈກໍຈະມາເຖິງຄວາມເຂົ້າໃຈ
และບັນດາຜູ້ທີ່ຈົ່ມ ກໍຈະຍອມຮຽນຮູ້ຄຳສອນຢ່າງດີ"

# ບົດທີ 30

## ການເຮັດສົນທິສັນຍາກັບເອຢິບເປັນຄວາມບາບ

1 ພຣະຜູ້ເປັນເຈົ້າ ບອກວ່າ "ວິບັດແກ່ລູກຫລານທີ່ດື້ດ້ານ
ຜູ້ວາງແຜນງານ ແຕ່ບໍ່ແມ່ນຂອງເຮົາ ຜູ້ປົກບັງດ້ວຍເຄື່ອງປົກປິດ
ແຕ່ບໍ່ແມ່ນຕາມນໍ້າພຣະໄທເຮົາ ພວກເຂົາຈະເພີ່ມບາບຊ້ອນບາບ
2 ຜູ້ອອກຍ່າງລົງໄປ ເອຢິບ ໂດຍບໍ່ຂໍຄຳປຶກສາຈາກປາກຂອງເຮົາ
ເພື່ອຈະເຂັ້ມແຂງໃນການລີ້ໄພກັບ ຟາຣາໂອ ເພື່ອຈະວາງໃຈໃນຮົ່ມເງົາຂອງ ເອຢິບ
3 ເຫດສັນນັ້ນ ການລີ້ໄພກັບ ຟາຣາໂອ ຈະກັບເປັນຄວາມອັບອາຍຂອງເຈົ້າ
และການວາງໃຈໃນຮົ່ມເງົາຂອງ ເອຢິບ ຈະເປັນທີ່ຂາຍໜ້າແກ່ເຈົ້າ
4 ເພາະແມ່ນວ່າຂ້າລາຊະການຂອງພວກເຂົາຢູ່ທີ່ ໂຊອານ
และທູດຂອງພວກເຂົາໄປເຖິງ ເມືອງ ຮາເນັດ ໃນ ເອຢິບ
5 ທຸກຄົນໄດ້ຮັບຄວາມອັບອາຍ ໂດຍຊົນຊາດໜຶ່ງຊຶ່ງຊ່ວຍພວກເຂົາບໍ່ໄດ້
ຊຶ່ງບໍ່ໄດ້ນຳຄວາມຊ່ວຍເຫລືອ
ຫລືປະໂຫຍດມາໃຫ້ ໄດ້ແຕ່ຄວາມອັບອາຍ และຄວາມຂາຍໜ້າ"

6 ພາລະເລື່ອງສັດປ່າຂອງພາກໃຕ້
ພວກເຂົາທັງຫລາຍບັນທຸກຊັບສົມບັດຂອງຕົນເທິງຫລັງລາ
ແລະບັນທຸກຊັບສິນຂອງຕົນເທິງໜອກອູດ
ໄປຕະຫລອດແຜ່ນດິນແຫ່ງຄວາມຍາກລຳບາກຢ່າງແສນເຈັບປວດ
ບ່ອນຊຶ່ງສິງໜຸ່ມແລະສິງແມ່ ງູຮ້າຍ ແລະງູໄຟອອກມາ
ໄປຫາຊົນຊາດໜຶ່ງຊຶ່ງຈະຊ່ວຍພວກເຂົາບໍ່ໄດ້
7 ເພາະວ່າຄວາມຊ່ວຍເຫລືອຂອງ ເອຢິບ ນັ້ນບໍ່ມີຄ່າແລະບໍ່ມີປະໂຫຍດ
ເຫດສັນນັ້ນ ເຮົາຈຶ່ງເອີ້ນພວກເຂົາວ່າ
"ຄວາມເຂັ້ມແຂງຂອງພວກເຂົາຄືໃຫ້ນັ່ງຢູ່ເສີຍໆ"
8 ບັດນີ້ ໄປສາ ຂຽນລົງໄວ້ເທິງແຜ່ນຈາລຶກຕໍ່ໜ້າພວກເຂົາ
ແລະຈົດໄວ້ໃນໜັງສື ເພື່ອໃນເວລາທີ່ຈະມາເຖິງ ຈະໄດ້ເປັນພະຍານເປັນນິດ
9 ເພາະວ່າພວກເຂົາທັງຫລາຍເປັນຊົນຊາດດື້ດ້ານ ເປັນລູກກະບົດ
ເປັນຫລານທີ່ບໍ່ຍອມຟັງພຣະບັນຍັດຂອງ ພຣະຜູ້ເປັນເຈົ້າ
10 ຊຶ່ງກ່າວແກ່ພວກຜູ້ທຳນວຍວ່າ "ຢ່າເຫັນເລີຍ" ແລະແກ່ຜູ້ທຳນວຍວ່າ
"ຢ່າທຳນວຍສິ່ງທີ່ຖືກຕ້ອງແກ່ເຮົາເລີຍ ຈົ່ງເວົ້າສິ່ງອ່ອນຫວານແກ່ເຮົາ
ຈົ່ງທຳນວຍຄວາມຫລອກລວງ
11 ຈົ່ງອອກຈາກທາງນັ້ນ ຈົ່ງຫລີກໜີຈາກຫົນທາງ
ໃຫ້ອົງບໍລິສຸດຂອງ ອິສຣາເອນ ພົ້ນໜ້າພົ້ນຕາຂອງເຮົາ"
12 ເຫດສະນັ້ນ ອົງບໍລິສຸດຂອງ ອິສຣາເອນ ບອກດັ່ງນີ້ວ່າ
"ເພາະວ່າເຈົ້າໝິ່ນປະໝາດຖ້ອຍຄຳນີ້ ແລະວາງໃຈໃນການບີບບັງຄັບ
ແລະການບໍ່ສັດຊື່ ແລະເພິ່ງອາໄສສິ່ງເຫລົ່ານັ້ນ
13 ເຫດສັນນັ້ນ ຄວາມຊົ່ວຊ້ານີ້ຈະເປັນແກ່ເຈົ້າ
ຄືກຳແພງສູງແຍກພົ້ນອອກໄປກຳລັງຈະພັງ
ຊຶ່ງຈະພັງລົງພາຍໃນພັບຕາດຽວ
14 ພຣະອົງຈະເຮັດໃຫ້ມັນແຕກຄືໝໍ້ດິນຂອງຊ່າງປັ້ນໝໍ້ ຊຶ່ງແຕກເປັນຕ່ອນໆຢ່າງບໍ່ປານີ
ອັນທີ່ແຕກນັ້ນບໍ່ພົບອັນດີພໍທີ່ຈະຕັກໄຟອອກຈາກເຕົາ
ຫລືໃຊ້ຕັກນໍ້າອອກຈາກອ່າງເກັບນໍ້າ"

## ຄົນອິສຣາເອນຕ້ອງກັບໃຈ ຂໍຄວາມຊ່ວຍເຫລືອຈາກພຣະເຈົ້າ

15 ເພາະວ່າອົງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ອົງບໍລິສຸດແຫ່ງ ອິສຣາເອນ ບອກດັ່ງນີ້ວ່າ
"ໃນການກັບມາ ແລະຢຸດພັກ ເຈົ້າທັງຫລາຍຈະລອດ
ກຳລັງຂອງເຈົ້າຈະຢູ່ໃນຄວາມສະຫງົບ ແລະຄວາມໄວ້ວາງໃຈ"
ແຕ່ເຈົ້າກໍບໍ່ຍອມເຮັດຕາມ
16 ແຕ່ເຈົ້າທັງຫລາຍກ່າວວ່າ "ຢ່າເລີຍ ເຮົາຈະຂີ່ມ້າໜີໄປ" ເຫດສັນນັ້ນ ເຈົ້າກໍຈະໜີໄປ

ແລະ “ເຮົາຈະຂີ່ມ້າແລ່ນໄວ” ຜູ້ໄລ່ຕາມເຈົ້າທັງຫລາຍຈະແລ່ນໄວອີ່ຫລີ
17 ຄົນພັນໜຶ່ງຈະໜີ ຍ້ອນວ່າຄຳຂູ່ເຂັນຂອງຄົນຄົນດຽວ ເຈົ້າທັງຫລາຍຈະໜີ
ຍ້ອນຄຳຂູ່ເຂັນຂອງຄົນຫ້າຄົນ ຈົນເຫລືອແຕ່ເຈົ້າຄືເສົາທຸງເທິງຍອດພູເຂົາ
ຄືກັບສັນຍານເທິງໂນນພູ
18 ພຣະຜູ້ເປັນເຈົ້າຄອຍຖ້າທີ່ຈະຊົງພຣະກະລຸນາເຈົ້າທັງຫລາຍ
ພຣະອົງຈຶ່ງເປັນທີ່ຍົກຍ້ອງເພື່ອຈະຊົງເມດຕາເຈົ້າ
ເພາະວ່າພຣະຜູ້ເປັນເຈົ້າຊົງເປັນພຣະເຈົ້າແຫ່ງຄວາມຍຸດຕິທຳ
ບັນດາຜູ້ທີ່ຄອຍຖ້າພຣະອົງຈະໄດ້ຮັບພຣະພອນ

19ເພາະວ່າປະຊາຊົນຈະອາໄສໃນຊີໂອນ ໃນເຢຣູຊາເລັມ ເຈົ້າຈະບໍ່ຮ້ອງໄຫ້ອີກຕໍ່ໄປ ເມື່ອ
ໄດ້ຍິນສຽງເຈົ້າຮ້ອງທູນ ພຣະອົງຈະເມດຕາເຈົ້າ ເມື່ອພຣະອົງໄດ້ຍິນ ພຣະອົງຈະຕອບເຈົ້າ
20ແລະເຖິງແມ່ນວ່າອົງພຣະຜູ້ເປັນເຈົ້າຈະປະທານອາຫານແຫ່ງຄວາມຍາກລຳບາກ ແລະນ້ຳ
ແຫ່ງຄວາມທຸກໃຈໃຫ້ແກ່ເຈົ້າ ເຖິງປານນັ້ນ ຄູທັງຫລາຍຂອງເຈົ້າຈະບໍ່ເຊື່ອງຕົວໃນແຈອີກເລີຍ
ແຕ່ຕາຂອງເຈົ້າຈະເຫັນຄູຂອງເຈົ້າ 21ແລະເມື່ອເຈົ້າຫັນໄປທາງຂວາ ຫລືຫັນໄປທາງຊ້າຍ ຫູ
ຂອງເຈົ້າຈະໄດ້ຍິນສຽງຢູ່ຂ້າງຫລັງເຈົ້າວ່າ “ນີ້ເປັນຫົນທາງ ຈົ່ງທຽວໄປໃນທາງນີ້” 22ແລ້ວເຈົ້າ
ຈະທຳລາຍຮູບເຄົາລົບເຄືອບເງິນຂອງເຈົ້າ ແລະຮູບເຄົາລົບເຄືອບຄຳຂອງເຈົ້າ ເຈົ້າຈະກະຈາຍ
ມັນໄປເໝືອນຢ່າງຜ້າອະນາໄມ ແລະເຈົ້າຈະກ່າວແກ່ມັນວ່າ “ໄປໃຫ້ພົ້ນ”

23ແລະພຣະອົງຈະຊົງປະທານຝົນໃຫ້ແກ່ເມັດພືດທີ່ເຈົ້າຫວ່ານລົງດິນ ແລະປະທານເຂົ້າ ຊຶ່ງ
ເປັນຜະລິດຜົນຂອງດິນ ເຂົ້າຈະອຸດົມ ແລະສົມບູນ ໃນມື້ນັ້ນ ງົວຂອງເຈົ້າຈະກິນຢູ່ໃນເດີ່ນຫຍ້າ
ໃຫຍ່ 24ງົວກັບລາທີ່ໃຊ້ເຮັດນາຈະກິນເຂົ້າໃສ່ເກືອ ຊຶ່ງໃຊ້ຊ້ອນ ແລະສ້ອມຟັດ 25ເທິງພູເຂົາສູງ
ທຸກແຫ່ງ ແລະເທິງໂນນພູສູງທຸກແຫ່ງຈະມີລຳທານ ມີນ້ຳໄຫລໃນມື້ທີ່ມີການຂ້າກັນ ເມື່ອຫໍຄອຍ
ພັງລົງ 26ຫລາຍກວ່ານັ້ນອີກ ແສງສະຫວ່າງຂອງດວງເດືອນຈະຄືກັບແສງສະຫວ່າງຂອງຕາ-
ເວັນ ແລະແສງສະຫວ່າງຂອງຕາເວັນຈະເປັນເຈັດເທົ່າ ແລະເປັນແສງສະຫວ່າງຂອງເຈັດມື້
ໃນມື້ທີ່ພຣະຜູ້ເປັນເຈົ້າພັນບາດແຜແຫ່ງຊົນຊາດຂອງພຣະອົງ ແລະປິ່ນປົວບາດແຜຊຶ່ງພວກ
ເຂົາຖືກພຣະອົງຕີນັ້ນ

27 ເບິ່ງແມ ພຣະນາມຂອງພຣະຜູ້ເປັນເຈົ້າມາຈາກບ່ອນໄກ
ຮ້ອນດ້ວຍຄວາມໂກດຮ້າຍຂອງພຣະອົງ
ພາລະນັ້ນກໍໜັກໜາ ສົບປາກຂອງພຣະອົງເຕັມໄປດ້ວຍຄວາມໂກດຮ້າຍ
ແລະລີ້ນຂອງພຣະອົງຄືກັບໄຟເຜົາຜານ
28 ລົມຫາຍໃຈຂອງພຣະອົງຄືລຳທານຖ້ວມລົ້ນ ທີ່ຖ້ວມເຖິງກາງຄໍ
ເພື່ອຈະຮ່ອນບັນດາປະຊາຊາດດ້ວຍເຄື່ອງຕອງແຫ່ງຄວາມເປົ່າວ່າງ
ແລະຈະມີບັງຫຽນຊຶ່ງພາໃຫ້ຫລົງໄປໃສ່ຄາງກະໄຕຂອງຊົນຊາດທັງຫລາຍ

29ເຈົ້າຈະມີບົດເພງເໝືອນຢ່າງຄ່ຳຄືນທີ່ມີເທດສະການສັກສິດ ແລະມີໃຈຍິນດີ ເໝືອນຢ່າງ
ຄົນທີ່ອອກຍ່າງຕາມສຽງຂຸ່ຍ ເພື່ອໄປຍັງພູເຂົາຂອງພຣະຜູ້ເປັນເຈົ້າ ເຖິງຜູ້ເປັນສີລາຂອງອິ-

ສຣາເອນ [30]ແລະ ພຣະຜູ້ເປັນເຈົ້າ ຈະເຮັດໃຫ້ພຣະສຸລະສຽງອັນມີອານຸພາບຂອງພຣະອົງ ເປັນທີ່
ໄດ້ຍິນ ແລະຈະຊົງໃຫ້ເຫັນພຣະກອນຟາດລົງຂອງພຣະອົງ ດ້ວຍຄວາມໂກດຮ້າຍຢ່າງຮ້າຍ
ແຮງ ແລະແປວໄຟເຜົາຜານ ພ້ອມກັບຝົນພະຍຸ ແລະໝາກເຫັບ [31]ຄົນ ອັດຊີເຣຍ ຈະຢ້ານກົວ
ດ້ວຍພຣະສຸລະສຽງຂອງ ພຣະຜູ້ເປັນເຈົ້າ ພຣະອົງຊົງນຕີດ້ວຍໄມ້ຄ້ອນຂອງພຣະອົງ [32]ແລະ
ຈັງຫວະໄມ້ຄ້ອນທຸກຈັງຫວະ ຊຶ່ງ ພຣະຜູ້ເປັນເຈົ້າ ຟາດລົງເໜືອລາວ ຈະເຂົ້າກັບສຽງກອງ ແລະ
ພິນຄູ່ ພຣະອົງຈະຕໍ່ສູ້ພວກເຂົາດ້ວຍສົງຄາມຂ້າຟັນ [33]ເພາະວ່າບ່ອນເຜົາສົບກໍຈັດໄວ້ດົນແລ້ວ
ໄດ້ຕຽມໄວ້ສຳລັບກະສັດ ຊຶ່ງພຣະອົງໄດ້ແຕ່ງບ່ອນນັ້ນໃຫ້ເລິກ ແລະ ກວ້າງ ພ້ອມໄຟ ແລະ
ຟືນຢ່າງຫລວງຫລາຍ ອັນເປັນບ່ອນເຜົາສົບຂອງ ພຣະຜູ້ເປັນເຈົ້າ ຄືມາດຫລວງຫລາຍມາຈຸດໃຫ້
ລຸກ

# ບົດທີ 31

## ພຣະຜູ້ເປັນເຈົ້າຈະປ້ອງກັນເຢຣູຊາເລັມ

[1] ວິບັດແກ່ຄົນເຫລົ່ານັ້ນທີ່ລົງໄປ ເອຢິບ
ເພື່ອຂໍຄວາມຊ່ວຍເຫລືອ ແລະໝາຍເພິ່ງມ້າ ຜູ້ທີ່ວາງໃຈໃນລົດຮົບ
ເພາະວ່າມີຫລາຍຄົນວາງໃຈໃນທະຫານມ້າ ພວກເຂົາທັງຫລາຍແຂງແຮງ
ແຕ່ບໍ່ໄດ້ໝາຍເຖິງອົງບໍລິສຸດຂອງ ອິສຣາເອນ ຫລືສະແຫວງຫາ ພຣະຜູ້ເປັນເຈົ້າ
[2] ແຕ່ເຖິງປານນັ້ນ ພຣະອົງຍັງສະຫລຽວສະຫລາດແລະຈະນຳໄພພິບັດມາໃຫ້
ພຣະອົງຈະບໍ່ໄດ້ເອີ້ນພຣະຄຳຂອງພຣະອົງຄືນມາ
ແຕ່ຈະລຸກຂຶ້ນຕໍ່ສູ້ກັບວົງວານຜູ້ກະທຳຄວາມຜິດ
ແລະຕໍ່ສູ້ກັບຜູ້ຊ່ວຍເຫລືອຂອງຄົນເຫລົ່ານັ້ນທີ່ກະທຳຄວາມຊົ່ວຊ້າ
[3] ຄົນ ເອຢິບ ເປັນຄົນ ບໍ່ແມ່ນ ພຣະເຈົ້າ
ແລະມ້າທັງຫລາຍຂອງພວກເຂົາເປັນເນື້ອໜັງ ບໍ່ແມ່ນວິນຍານ
ເມື່ອ ພຣະຜູ້ເປັນເຈົ້າ ຈະຢຽດພຣະຫັດຂອງພຣະອົງອອກ
ທັງຜູ້ຊ່ວຍເຫລືອກໍຈະສະດຸດ ແລະຜູ້ທີ່ຮັບການຊ່ວຍເຫລືອກໍຈະລົ້ມ
ແລະພວກເຂົາທັງຫລາຍຈະລົ້ມເຫລວນຳກັນ
[4] ເພາະວ່າ ພຣະຜູ້ເປັນເຈົ້າ ບອກກັບຂ້າພະເຈົ້າດັ່ງນີ້ວ່າ
"ດັ່ງສິງໃຫຍ່ ຫລືສິງໃຫຍ່ໜຸ່ມຄຳລາມຢູ່ເໜືອເຫຍື່ອຂອງມັນ
ເມື່ອພວກເຂົາເອີ້ນຜູ້ລ້ຽງແກະໝູ່ໜຶ່ງມາສູ້ມັນ
ມັນຈະບໍ່ຢ້ານຕໍ່ສຽງຂອງພວກເຂົາທັງຫລາຍ
ຫລືປົບໜີຕໍ່ສຽງຕໍ່ໜ້າຂອງພວກເຂົາແຕ່ຢ່າງໃດ
ດັ່ງນັ້ນແຫລະພຣະຜູ້ເປັນເຈົ້າ ແຫ່ງຈັກກະວານຈະສະເດັດລົງມາ
ເພື່ອສູ້ຮົບເພື່ອພູເຂົາຊີໂອນ ແລະເພື່ອໂນນພູຂອງມັນ
[5] ຄືກັບນົກບິນເວີນຢູ່

ດັ່ງນັ້ນແຫລະພຣະຜູ້ເປັນເຈົ້າ ແຫ່ງຈັກກະວານຈະປ້ອງກັນ ເຢຣູຊາເລັມ
ພຣະອົງຈະປ້ອງກັນ ແລະຊ່ວຍໃຫ້ພົ້ນ ພຣະອົງຈະເວັ້ນໜີ ແລະຈະຮັກສາຊີວິດໄວ້
6 ຈົ່ງກັບມາຫາພຣະອົງ ຜູ້ທີ່ປະຊາຊົນອິສຣາເອນໄດ້ກະບົດຢ່າງຮ້າຍແຮງ 7 ເພາະວ່າໃນມື້
ນັ້ນ ທຸກຄົນຈະຖິ້ມຮູບເຄົາລົບຂອງຕົນທີ່ເຮັດດ້ວຍເງິນ ແລະຮູບເຄົາລົບຂອງຕົນທີ່ເຮັດດ້ວຍຄຳ
ຊຶ່ງມືຂອງເຈົ້າໄດ້ເຮັດຂຶ້ນຢ່າງບາບໜາສຳລັບຕົວເຈົ້າເອງ

8 ຄົນອັດຊີເຣຍຈະລົ້ມລົງດ້ວຍດາບ ຊຶ່ງບໍ່ແມ່ນຂອງຊາຍໜຸ່ມ
ແລະດາບຊຶ່ງບໍ່ແມ່ນຂອງຄົນຕໍ່າຕ້ອຍຈະ ກິນພວກເຂົາ
ແລະພວກເຂົາຈະໜີຈາກດາບ ຄົນໜຸ່ມຂອງພວກເຂົາຈະພ່າຍແພ້ຢ່າງສິ້ນເຊີງ
9 ພວກເຂົາຈະຂ້າມທີ່ກຳບັງຂອງພວກເຂົາໄປ ຍ້ອນຄວາມຢ້ານກົວ
ແລະພວກເຈົ້ານາຍຂອງພວກເຂົາຈະຢ້ານທຸງນັ້ນ"
ພຣະຜູ້ເປັນເຈົ້າຜູ້ທີ່ໄຟຂອງພຣະອົງຢູ່ໃນຊີໂອນ
ແລະຜູ້ທີ່ເຕົາຂອງພຣະອົງຢູ່ໃນ ເຢຣູຊາເລັມບອກດັ່ງນີ້ແຫລະ

# ບົດທີ 32

## ກະສັດທີ່ຊອບທັມ

1 ມື້ໜຶ່ງ ຈະມີກະສັດທີ່ຊອບທຳອົງໜຶ່ງ
ແລະຈະມີເຈົ້ານາຍທີ່ປົກຄອງດ້ວຍຄວາມຍຸດຕິທຳ
2 ເຈົ້ານາຍແຕ່ລະຄົນຈະເປັນເໝືອນເຄື່ອງບັງລົມ ເໝືອນບ່ອນຫລົກພະຍຸ
ເໝືອນສາຍນໍ້າໄຫລໃນຖິ່ນແຫ້ງແລ້ງກັນດານ
ແລະເໝືອນຮົ່ມເງົາຈາກໂງ່ນຫີນໃຫຍ່ໃນແຜ່ນດິນທີ່ແຫ້ງແລ້ງ.
3 ພວກເພິ່ນຈະເບິ່ງແຍງ ແລະຮັບຟັງຄວາມຕ້ອງການຂອງປະຊາຊົນ.
4 ຈະບໍ່ໃຈຮ້ອນອີກຕໍ່ໄປ ແຕ່ຈະເຮັດໂດຍໃຊ້ຄວາມຮູ້ແລະເວົ້າແຕ່ສິ່ງທີ່ມີປະໂຫຍດ.
5 ຈະບໍ່ມີໃຜຄິດວ່າຄົນໂງ່ເປັນຄົນມີກຽດ ຫລືເວົ້າວ່າຄົນໂກງເປັນຄົນທີ່ສັດຊື່.
6 ຄົນໂງ່ກໍເວົ້າແຕ່ເລື່ອງໂງ່ໆ ແລະຄິດກະທຳແຕ່ສິ່ງທີ່ບໍ່ດີ ສິ່ງທີ່ລາວເຮັດ
ແລະເວົ້າລ້ວນແຕ່ໝິ່ນປະໝາດພຣະເຈົ້າ ແລະຈະບໍ່ໃຫ້ເຂົ້ານໍ້າແກ່ຜູ້ທີ່ຫິວ.
7 ສ່ວນຄົນຂີ້ໂກງ ລາວເປັນຄົນຊົ່ວ ແລະເຮັດແຕ່ສິ່ງທີ່ຊົ່ວຮ້າຍ
ວາງແຜນທຳຮ້າຍຄົນທຸກຍາກດ້ວຍການຕົວະ ແລະຂັດຂວາງສິດທິຂອງພວກເຂົາ.
8 ແຕ່ຄົນທີ່ສັດຊື່ກໍເຮັດແຕ່ຄວາມສັດຊື່ ແລະຕັ້ງໝັ້ນຢູ່ໃນສິ່ງທີ່ຖືກຕ້ອງເທົ່ານັ້ນ.

## ການພິພາກສາໂທດ ແລະເຮັດໃຫ້ດີຄືເກົ່າ

9 ພວກຜູ້ຍິງທີ່ມີຊີວິດຢູ່ຢ່າງງ່າຍໆແລະບໍ່ເຄີຍຫົວຊານຳຫຍັງ ຈົ່ງຟັງຂ້າພະເຈົ້າ.
10 ດຽວນີ້ພວກເຈົ້າອີ່ມໜຳສຳລານດີ
ແຕ່ໃນປີຕໍ່ໄປນີ້ພວກເຈົ້າອາດໝົດຫວັງ ເພາະວ່າຈະບໍ່ມີໝາກອະງຸ່ນກິນ.
11 ພວກຜູ້ຍິງທີ່ມີຊີວິດຢູ່ຢ່າງງ່າຍໆ ແລະບໍ່ເຄີຍຫົວຊານຳຫຍັງ ລະວັງເດີ້

ພວກເຈົ້າຈະຢ້ານກົວຕົວສັ່ນ! ຈົ່ງແກ້ເຄື່ອງນຸ່ງອອກ
ແລ້ວເອົາຜ້າຂາດມັດແອວໄວ້ ຈົ່ງຕີຕາງຮ້ອງໄຫ້ຂຶ້ນ.
12 ເພາະວ່ານາດີ ແລະສວນອະງຸ່ນຈະຖືກທຳລາຍແລ້ວຫຍ້າ
ແລະໄມ້ມີໜາມໄດ້ເກີດຂຶ້ນເທິງທີ່ດິນໄພ່ພົນຂອງເຮົາ.
13-14 ຈົ່ງຮ້ອງໄຫ້ເທີ້ນ ເພາະວ່າເຮືອນທຸກຫລັງທີ່ປະຊາຊົນອາໄສຢູ່ຢ່າງມີຄວາມສຸກ
ແລະເມືອງທີ່ເຕັມໄປດ້ວຍຄວາມມ່ວນຊື່ນຍິນດີ ຕະຫລອດທັງພະລາຊະວັງ
ແລະເມືອງຫລວງນັ້ນ ຖືກປະຖິ້ມເພພັງຮ້າງເປົ່າໝົດ
ໝູ່ບ້ານແລະປ້ອມຍາມຮັກສາການຈະເສຍຫາຍຕະຫລອດໄປ ລໍປ່າຈະໄປທີ່ນັ້ນ
ແລະມັນຈະເປັນທົ່ງຫຍ້າຂອງໝູ່ແກະ.
15 ແຕ່ພຣະເຈົ້າຈະປະທານພຣະວິນຍານໃຫ້ພວກເຮົາອີກເທື່ອໜຶ່ງ
ຄືແຜ່ນດິນທີ່ເປົ່າແປນຈະກາຍເປັນແຜ່ນດິນອັນອຸດົມສົມບູນ
ແລະໄຮ່ນາຈະເກີດດອກອອກຜົນຢ່າງຫລວງຫລາຍ.
16 ຄວາມຊອບທຳ ແລະຄວາມຍຸດຕິທຳຈະມີທົ່ວໄປໃນປະເທດ.
17 ເພາະວ່າທຸກໆ ຄົນຈະເຮັດຖືກຕ້ອງ
ຈຶ່ງຈະມີຄວາມສະຫງົບສຸກເກີດຂຶ້ນມາ ແລະໝັ້ນຄົງຕະຫລອດໄປ.
18 ບ້ານເຮືອນແຫ່ງໄພ່ພົນຂອງພຣະເຈົ້າຈະມີຄວາມສະຫງົບສຸກ
ແລະປອດໄພ ພວກເຂົາຈະບໍ່ຖືກຣົບກວນ.
19-20 (ໝາກເຫັບຈະຕົກລົງມາຕາມປ່າ ແລະເມືອງຈະເຈື່ອນເພພັງ)
ທຸກໆ ຄົນຈະມີຄວາມສຸກ ເພາະວ່າມີໜອງນໍ້າສຳລັບເພາະປູກ
ແລະມີທົ່ງຫຍ້າໃຫ້ງົວແລະຄວາຍກິນຢ່າງອິດສະຫລະ ແລະປອດໄພໃນທຸກໆບ່ອນ.

# ບົດທີ 33

## ການອ້ອນວອນຂໍຄວາມຊ່ອຍເຫລືອ

1 ພວກສັດຕູຂອງເຮົາຈະປະສົບໄພພິບັດ! ພວກເຂົາເປັນພວກປຸ້ນ
ແລະຄົນທໍລະຍົດ ເຖິງແມ່ນບໍ່ມີໃຜປຸ້ນແລະທໍລະຍົດພວກເຂົາ
ແຕ່ວັນເວລາແຫ່ງການຖືກປຸ້ນຖືກທໍລະຍົດຈະມາເຖິງພວກເຂົາ
ຄືພວກເຂົາຈະຕົກເປັນເຫຍື່ອຂອງການຖືກປຸ້ນຖືກທໍລະຍົດ.

2 ໂອ ພຣະຜູ້ເປັນເຈົ້າຂໍຊົງເມດຕາພວກຂ້ານ້ອຍແດ່ທ້ອນ
ພວກຂ້ານ້ອຍຫວັງເພິ່ງພຣະອົງ ຂໍຊົງຄຸ້ມຄອງຮັກສາພວກຂ້ານ້ອຍທຸກໆ ວັນ
ແລະຂໍຊ່ອຍພວກຂ້ານ້ອຍໃນເວລາທຸກຍາກລຳບາກ.
3 ເມື່ອພຣະອົງຊົງຊ່ອຍຣົບ ແລະມີສຽງຟ້າຮ້ອງ
ຊົນຊາດທັງຫລາຍກໍປົບໜີໄປຈາກສະໜາມຣົບ.
4 ແລະສິ່ງຂອງໆພວກເຂົາຈະຖືກຍຶດເອົາໄປຈົນກ້ຽງ.

5 ພຣະຜູ້ເປັນເຈົ້າຊົງຍິ່ງໃຫຍ່ແທ້! ພຣະອົງຊົງຄອບຄອງສັບພະທຸກສິ່ງທັງປວງ.
6 ຈະຊົງເຮັດໃຫ້ນະຄອນ ເຢຣູຊາເລັມ ຍຸດຕິທຳ
ແລະຊອບທຳ ແລະຊົງເຮັດໃຫ້ຊາດມີຄວາມໝັ້ນຄົງ ພ້ອມທັງຊົງເປັນຄວາມລອດພົ້ນ
ໃຫ້ສະຕິປັນຍາຄວາມຮູ້ແກ່ໄພ່ພົນຂອງພຣະອົງ
ຊັບສົມບັດອັນປະເສີດຂອງພວກເຂົາຄືການຢຳເກງ ພຣະຜູ້ເປັນເຈົ້າ.

7 ຄົນກ້າຫານຈະຮ້ອງຂໍໃຫ້ຊ່ອຍ! ຄະນະທູດສັນຕິພາບຈະຮ້ອງໄຫ້ດ້ວຍຄວາມຂົມຂື່ນ.
8 ຕາມຖະໜົນຫົນທາງຈະເຕັມໄປດ້ວຍອັນຕະລາຍແລະບໍ່ມີຄົນທ່ຽວສັນຍາ
ແລະຂໍ້ຕົກລົງຕ່າງໆຈະຖືກລ່ວງລະເມີດ ຈະບໍ່ມີການເຄົາລົບນັບຖືຊຶ່ງກັນແລະກັນ.
9 ແຜ່ນດິນຖືກປະຮ້າງວ່າງເປົ່າ ກົກໄມ້ໃນພູເລບານອນ ໄດ້ຫ່ຽວແຫ້ງຕາຍໄປ
ຮ່ອມພູຊາໂຣນ ທີ່ອຸດົມສົມບູນກໍເປັນຄືຖິ່ນແຫ້ງແລ້ງກັນດານ
ໃບໄມ້ໃນ ບາຊານ ແລະເທິງພູກາເມນ ກໍລົ້ມລົງໝົດ.

## ພຣະຜູ້ເປັນເຈົ້າຊົງເຕືອນພວກສັດຕູ

10 ພຣະຜູ້ເປັນເຈົ້າ ຊົງບອກຊົນຊາດທັງຫລາຍວ່າ,
“ບັດນີ້ ເຮົາຈະລົງມື ເຮົາຈະສະແດງໃຫ້ເຫັນວ່າ ເຮົາມີອຳນາດເທົ່າໃດ.
11 ພວກເຈົ້າມີແຜນການຮ້າຍ ແລະເຮັດທຸກສິ່ງທີ່ບໍ່ມີປະໂຫຍດ
ສະນັ້ນ ພວກເຈົ້າຈະທຳລາຍຕົວເອງ.
12 ຈະມຸ່ນໄປເໝືອນກັບເຜົາຫີນເປັນປູນ ແລະເໝືອນກັບຈູດເຜົາໜາມ.
13 ໃຫ້ທຸກຄົນທັງຢູ່ໃກ້ ແລະຢູ່ໄກຟັງວ່າ ເຮົາໄດ້ກະທຳຫຍັງແດ່
ແລະຈົ່ງຮັບຮູ້ກຳລັງຂອງເຮົາ.”
14 ພວກຄົນບາບໃນຊີໂອນ ຈະສັ່ນສະທ້ານຢ້ານກົວ ພວກເຂົາເວົ້າວ່າ,
“ການພິພາກສາໂທດຂອງ ພຣະເຈົ້າ ເປັນເໝືອນໄຟເຜົາຕະຫລອດໄປ
ຈະບໍ່ມີໃຜໃນພວກເຮົາໜີຈາກໄຟນັ້ນໄດ້.”
15 ຖ້າພວກເຈົ້າເວົ້າ ແລະເຮັດແຕ່ສິ່ງທີ່ຊອບທຳ ພວກເຮົາກໍຈະລອດພົ້ນ
ຢ່າໃຊ້ອຳນາດຂົ່ມຂູ່ຄົນທຸກຍາກ ຢ່າຮັບສິນບົນ.
16 ຢ່າຮ່ວມມືກັບຜູ້ວາງແຜນຂ້າຄົນ ຫລືຜູ້ເຮັດຊົ່ວຮ້າຍອື່ນໆ ແລ້ວເຈົ້າຈະສຳເລັດຜົນ
ຈະມີຊີວິດໝັ້ນຄົງເໝືອນປ້ອມອັນແຂງແກ່ນ ຈະມີອາຫານ ແລະນໍ້າກິນພຽງພໍ.

## ອະນາຄົດທີ່ຮຸ່ງເຮືອງ

17 ເຈົ້າຈະເຫັນກະສັດອົງມີກຽດສູງສຸດຂຶ້ນປົກຄອງອີກເທື່ອໜຶ່ງ
ແຜ່ນດິນຈະຂະຫຍາຍກວ້າງອອກໄປທຸກດ້ານ.
18 ຄົນເກັບພາສີຊາວຕ່າງຊາດທີ່ເຈົ້າເຄີຍຢ້ານກົວມາຕັ້ງແຕ່ກ່ອນ
ກັບພວກນັກສືບສອດແນມຈະເປັນພຽງອະນຸສອນເຕືອນໃຈເທົ່ານັ້ນ.
19 ເຈົ້າຈະບໍ່ໄດ້ເຫັນຊາວຕ່າງຊາດ ຜູ້ໂອ້ອວດ ແລະເວົ້າພາສາທີ່ເຈົ້າບໍ່ເຂົ້າໃຈອີກຕໍ່ໄປ.

20 ຈົ່ງເບິ່ງຊີໂອນ ເມືອງທີ່ເຮົາສະເຫລີມສະຫລອງພິທີສາດສະໜາ
ຈົ່ງເບິ່ງ ເຢຣູຊາເລັມ! ມັນຈະເປັນບ່ອນຢູ່ອາໄສທີ່ປອດໄພ
ຈະເປັນເໝືອນຕູບຜ້າເຕັນທີ່ບໍ່ຍ້າຍຈັກເທື່ອ ຄືຫລັກເຕັນຈະບໍ່ຖືກຖອນ
ແລະເຊືອກຜູກກໍຈະບໍ່ຂາດຈັກເທື່ອ.
21 ພຣະຜູ້ເປັນເຈົ້າຈະຊົງສະແດງໃຫ້ເຮົາເຫັນພຣະລັດສະໝີ
ຄວາມຍິ່ງໃຫຍ່ຂອງພຣະອົງ ພວກເຮົາຈະໄດ້ອາໄສຢູ່ຕາມແຄມແມ່ນໍ້າ
ແລະລຳຫ້ວຍທີ່ກວ້າງໃຫຍ່ ຈະບໍ່ມີເຮືອແພຂອງສັດຕູແລ່ນໄປມາໃນແມ່ນໍ້ານີ້.
22-23 ສາຍໂຍງໃບເຮືອທຸກໆ ສາຍກໍໃຊ້ການບໍ່ໄດ້ ເປັນເຫດໃຫ້ໃບຂອງມັນບໍ່ກາງອອກ
ສິ່ງຂອງທັງໝົດທີ່ຍຶດເອົາມາຈາກກອງທັບສັດຕູ
ແມ່ນແຕ່ຄົນພິການກໍມີສ່ວນໄດ້ຮັບສິ່ງຂອງອັນຫລວງຫລາຍນັ້ນ
ພຣະຜູ້ເປັນເຈົ້າເອງຈະຊົງເປັນກະສັດຂອງເຮົາ
ຈະປົກຄອງ ແລະຄຸ້ມກັນພວກເຮົາ.
24 ຈະບໍ່ມີໃຜໃນປະເທດຂອງເຮົາຮ້ອງວ່າ ເຈັບໄຂ້ອີກ ທຸກໆ
ຄົນຈະໄດ້ຮັບການອະໄພບາບ.

# ບົດທີ 34

## ນີ້ຂອງພຣະຜູ້ເປັນເຈົ້າ ແລະພຣະພິໂລດຂອງພຣະອົງ

1 ໂອ ບັນດາປະຊາຊາດເອີຍ ຈົ່ງຫຍັບເຂົ້າມາໃກ້ຈະໄດ້ຟັງ
ແລະຊົນຊາດທັງຫລາຍເອີຍ ຟັງເດີ້ ຂໍໃຫ້ແຜ່ນດິນໂລກ
ແລະສັບພະສິ່ງໃນນັ້ນຟັງ ທັງໂລກ ແລະບັນດາສິ່ງທີ່ມາຈາກໂລກ
2 ເພາະວ່າພຣະຜູ້ເປັນເຈົ້າຊົງຮ້າຍຕໍ່ປະຊາຊາດທັງໝົດ
ແລະດຸເດືອດຕໍ່ພົນໂຍທາທັງໝົດຂອງພວກເຂົາ ພຣະອົງສັງຫານ
ແລະທຳລາຍພວກເຂົາຢ່າງເດັດຂາດ ແລະມອບພວກເຂົາໄວ້ແກ່ການຂ້າຟັນ
3 ຄົນທີ່ຖືກຂ້າຂອງພວກເຂົາຈະຖືກຖິ້ມອອກໄປ
ແລະກິ່ນເໝັນຂອງສົບຈະເຜີຍແຜ່ທົ່ວໄປ
ພູເຂົາຈະລະລາຍໄປດ້ວຍເລືອດຂອງພວກເຂົາ
4 ບໍລິວານທັງໝົດຂອງຟ້າສະຫວັນຈະລະລາຍໄປ
ແລະທ້ອງຟ້າກໍຈະມ້ວນຄືໜັງສືມ້ວນ
ບໍລິວານທັງໝົດຂອງມັນຈະຫລົ່ນຄືໃບໄມ້ຫລົ່ນຈາກເຄືອອະງຸ່ນ
ເໝືອນຢ່າງໝາກເດື່ອຫລົ່ນຈາກຕົ້ນໝາກເດື່ອ
5 ເພາະວ່າດາບຂອງເຮົາຈະໄດ້ດື່ມຈົນອີ່ມໃນຟ້າສະຫວັນ
ເບິ່ງແມ ມັນຈະລົງມາເພື່ອພິພາກສາ ເອໂດມ ແລະ ຊົນຊາດທີ່ເຮົາສາບແຊ່ງແລ້ວ
6 ດາບຂອງ ພຣະຜູ້ເປັນເຈົ້າເຕັມໄປດ້ວຍເລືອດ

ແລະມີໄຂມັນຕິດກັບເລືອດຂອງລູກແກະ
ແລະແບ້ ກັບໄຂມັນ ຂອງໝາກໄຂ່ຫລັງແກະຜູ້
ເພາະວ່າ ພຣະຜູ້ເປັນເຈົ້າ ມີການຂ້າບູຊາໃນເມືອງ ໂບຊະຣາ
ການຂ້າຂະໜາດໃຫຍ່ ໃນແຜ່ນດິນ ເອໂດມ
7 ງົວກະທິງຈະລົ້ມລົງພ້ອມກັບພວກເຂົາດ້ວຍ ແລະງົວໜຸ່ມຈະລົ້ມຢູ່ກັບງົວທີ່ໜຸ່ມ
ແຜ່ນດິນຂອງພວກເຂົາຈະປຽກໄປ ດ້ວຍເລືອດ ແລະດິນຈະໄດ້ອຸດົມດ້ວຍໄຂມັນ
8 ເພາະວ່າ ພຣະຜູ້ເປັນເຈົ້າ ມີມື້ເພື່ອການແກ້ແຄ້ນ ມີປີແຫ່ງການຕອບແທນ
ເພື່ອການໂຕ້ແຍ້ງກັນຂອງຊີໂອນ
9 ແລະລຳທານແຫ່ງ ເອໂດມ ຈະກາຍເປັນຢາງປູມາງ
ແລະດິນຂອງເມືອງນີ້ຈະກາຍເປັນມາດ ແຜ່ນດິນນີ້ ຈະກາຍເປັນຢາງປູມາງທີ່ລຸກຢູ່
10 ທັງກາງຄືນ ແລະກາງເວັນຈະບໍ່ດັບ ຄວັນຂອງມັນຈະຂຶ້ນຢູ່ສະເໝີເປັນນິດ
ມັນຈະຖືກຖິ້ມຢູ່ທຸກຊົ່ວອາຍຸ ບໍ່ມີໃຜຈະຜ່ານໄປໄດ້
11 ແຕ່ນົກກະທຸງ ແລະແຍ້ບ້ານຈະຍຶດມັນເປັນກຳມະສິດ
ນົກອິນຊີ ແລະໂຕກາຈະອາໄສຢູ່ທີ່ນັ້ນ
ພຣະອົງຈະຂຶງສາຍແຫ່ງຄວາມຫຍຸ້ງຍາກເໜືອມັນ
ແລະປ່ອຍລູກດິ່ງແຫ່ງຄວາມວ່າງເປົ່າ
12 ພວກເຂົາຈະເອີ້ນພວກຂຸນນາງມາຍັງລາຊະອານາຈັກ
ແຕ່ບໍ່ມີເລີຍ ແລະບັນດາເຈົ້ານາຍຂອງມັນຈະບໍ່ມີຄ່າເລີຍ
13 ຕົ້ນໜາມຈະງອກເໜືອທີ່ກຳບັງອັນເຂັ້ມແຂງຂອງມັນ
ຕຳແຍ ແລະຕົ້ນໜາມຈະງອກໃນປ້ອມປ້ອງກັນຂອງມັນ
ແລະຈະເປັນບ່ອນທີ່ໝາປ່າຢູ່ ແລະເປັນເດີ່ນຂອງນົກເຄົ້າແມວ
14 ແລະສັດປ່າຈະພົບກັບໝາຈິ້ງຈອກ ແບ້ປ່າຈະຮ້ອງຫາໝູ່ຂອງມັນ
ແລະ ຜີຈະລົງມາທີ່ນັ້ນ ຫາບ່ອນເຊົາເມື່ອຍ
15 ນົກເຄົ້າຈະເຮັດຮັງ ແລະອອກໄຂ່ຢູ່ທີ່ນັ້ນຟັກໄຂ່
ແລະຮວບຮວມລູກອ່ອນໄວ້ໃນເງົາຂອງມັນ
ແລະນົກແຮ້ງປີກດຳຈະລວມກັນຢູ່ທີ່ນັ້ນ ຕ່າງຄູ່ກໍຢູ່ກັບຄູ່ຂອງມັນ
16 ຈົ່ງຊອກຫາ ແລະອ່ານຈາກໜັງສືຂອງ ພຣະຜູ້ເປັນເຈົ້າ
ສັດເຫລົ່ານີ້ຈະບໍ່ຂາດໄປຈັກຢ່າງດຽວ ບໍ່ມີຕົວໃດທີ່ຈະບໍ່ ມີຄູ່
ເພາະວ່າໜັງສືນັ້ນໄດ້ບັນຊາປາກຂອງເຮົາແລ້ວ
ແລະ ພຣະວິນຍານ ຂອງພຣະອົງໄດ້ຮວບຮວມໄວ້
17 ພຣະອົງຈັບສະຫລາກໃຫ້ມັນແລ້ວ
ພຣະຫັດຂອງພຣະອົງໄດ້ປັນສ່ວນໃຫ້ດ້ວຍເຊືອກວັດແທກ
ມັນທັງຫລາຍຈະໄດ້ກຳມະສິດເປັນນິດ ມັນຈະອາໄສຢູ່ໃນທີ່ນັ້ນທຸກຊົ່ວອາຍຸ

# ບົດທີ 35

## ທາງບໍລິສຸດ

1 ຖິ່ນແຫ້ງແລ້ງກັນດານຈະເປັນບ່ອນມ່ວນຊື່ນຍິນດີ
ດອກໄມ້ຈະອອກດອກຢູ່ໃນດິນແຫ້ງແລ້ງ.
2 ຈະມີສຽງຮ້ອງເພງ ແລະມີສຽງມ່ວນຊື່ນໃນຖິ່ນແຫ້ງແລ້ງກັນດານ
ມັນຈະເປັນຖິ່ນສວຍງາມເໝືອນພູເລບານອນ
ຈະອຸດົມສົມບູນເໝືອນພູກາເມນ ແລະທົ່ງຊາໂຣນ
ທຸກຄົນຈະເຫັນຄວາມສະຫງ່າງາມຂອງ ພຣະເຈົ້າ
ເຫັນຄວາມຍິ່ງໃຫຍ່ ແລະລິດທານຸພາບຂອງພຣະອົງ.
3 ຈົ່ງໃຫ້ແຮງແກ່ມືທີ່ເມື່ອຍ
ແລະແກ່ຫົວເຂົ່າທີ່ສັ່ນດ້ວຍຄວາມອ່ອນແຮງ.
4 ຈົ່ງຊູໃຈຄົນຢ້ານ
ໃຫ້ມີໃຈເຂັ້ມແຂງ ແລະຢ່າຢ້ານ
ພຣະເຈົ້າ ຈະສະເດັດມາຊ່ອຍ
ຈະມາແກ້ແຄ້ນສັດຕູຂອງພວກເຂົາ.
5 ຄົນຕາບອດຈະເຫັນຮຸ່ງ
ຄົນຫູໜວກຈະໄດ້ຍິນ.
6 ຄົນພິການກໍຈະເຕັ້ນ ແລະຟ້ອນຄືຟານ
ຄົນປາກກືກໍຈະໂຮຮ້ອງດ້ວຍຄວາມຍິນດີ
ສາຍນໍ້າຈະໄຫລຜ່ານຖິ່ນແຫ້ງແລ້ງກັນດານ.
7 ຊາຍຮ້ອນຈະກາຍເປັນໜອງນໍ້າ
ດິນທີ່ແຫ້ງແລ້ງຈະມີນໍ້າອອກບໍ່
ບ່ອນທີ່ໝາໄນເຄີຍນອນ
ຈະມີຫຍ້າ ແລະກົກອໍ້ເກີດຂຶ້ນ.
8 ຢູ່ບ່ອນນັ້ນຈະມີທາງຫລວງ
ທາງນັ້ນຊື່ວ່າ, "ທາງບໍລິສຸດ"
ຄົນບາບກັບຄົນໂງ່ຈະຍ່າງຕາມທາງນັ້ນບໍ່ໄດ້.
9 ເສືອສິງຈະບໍ່ມີໃນທີ່ນັ້ນ
ສັດຮ້າຍທັງຫລາຍຈະບໍ່ມາທາງນີ້
ຄົນຜູ້ທີ່ ພຣະຜູ້ເປັນເຈົ້າ ໄດ້ຊົງກອບກູ້ແລ້ວ
ຈະດຳເນີນໄປຕາມທາງນີ້ໄດ້ຢ່າງສະບາຍ.
10 ພວກເຂົາຈະເຖິງ ເຢຣູຊາເລັມ ດ້ວຍຄວາມຍິນດີ
ຈະຮ້ອງເພງ ແລະໂຮຮ້ອງຢ່າງມ່ວນຊື່ນ

ຈະມີຄວາມສຸກແລະຫາຍທຸກກັງວົນຕະຫລອດໄປ.

# ບົດທີ 36

## ເສັນນາເກຣິບບຸກລຸກຢູດາ

1ຕໍ່ມາໃນປີທີສິບສີ່ແຫ່ງລາຊະການກະສັດ ເຮເຊກີຢາ ເສັນນາເກຣິບ ກະສັດ ແຫ່ງ ອັດຊີເຣຍ
ໄດ້ຍົກຂຶ້ນມາຕໍ່ສູ້ບັນດານະຄອນທີ່ມີປ້ອມຂອງ ຢູດາ ແລະຍຶດເອົາເມືອງໄດ້ 2ແລະກະສັດແຫ່ງ
ອັດຊີເຣຍ ໄດ້ສັ່ງໃຫ້ ຣັບຊາເກ ໄປຈາກເມືອງ ລາກິດ ເຖິງກຸງ ເຢຣູຊາເລັມ ເຂົ້າເຝົ້າກະສັດ ເຮ-
ເຊກີຢາ ພ້ອມກັບກອງທັບໃຫຍ່ ແລະເພິ່ນມາຢືນຢູ່ທາງຮ່ອງລະບາຍນໍ້າເທິງຖະໜົນເດີ່ນຊັກຜ້າ
3ເອລີຢາກິມ ລູກຊາຍ ຮິນກີຢາ ກໍອອກມາຫາເພິ່ນ ເອລີຢາກິມ ເປັນຜູ້ບັນຊາການລາຊະສຳນັກ
ພ້ອມກັບ ເຊັບນາ ລາຊະເລຂາ ແລະ ໂຢອາ ລູກຊາຍ ອາສັບ ຜູ້ຮັບຜິດຊອບການບັນທຶກ

## ຣັບຊາເກຂູ່ເຂັນອິສຣາເອນ

4ແລະ ຣັບຊາເກ ເວົ້າກັບພວກເຂົາວ່າ "ຈົ່ງທູນຕອບ ເຮເຊກີຢາ ວ່າ 'ພະມະຫາກະສັດ ຄືກະ-
ສັດແຫ່ງ ອັດຊີເຣຍ ບອກດັ່ງນີ້ວ່າ ທ່ານວາງໃຈໃນອັນໃດ 5ທ່ານຄິດວ່າ (ເປັນພຽງແຕ່ຖ້ອຍຄຳ
ເປົ່າໆ) "ເຮົາມີຍຸດທະສາດ ແລະມີລິດທານຸພາບ" ຫລື ດຽວນີ້ທ່ານວາງໃຈໃນໃຜ ທ່ານຈຶ່ງໄດ້
ກະບົດຕໍ່ເຮົາ 6ເບິ່ງແມ ທ່ານວາງໃຈໃນໄມ້ເທົ້າເປັນໄມ້ອໍ້ທີ່ຫັກ ຄື ເອຢິບ ຊຶ່ງຈະຕຳມືຂອງຄົນ
ໃດທີ່ໃຊ້ໄມ້ເທົ້ານັ້ນຍັນ ຟາຣາໂອ ກະສັດ ແຫ່ງ ເອຢິບ ເປັນ ເຊັ່ນນັ້ນຕໍ່ທຸກຄົນທີ່ວາງໃຈ ໃນຕົນ
7ແຕ່ຖ້າທ່ານຈະບອກເຮົາວ່າ "ເຮົາວາງໃຈໃນ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງເຮົາ" ປູຊະນີຍະ-
ສະຖານສູງ ແລະແທ່ນບູຊາຂອງພຣະອົງນັ້ນ ບໍ່ແມ່ນບໍທີ່ ເຮເຊກີຢາ ຮື້ຖິ້ມແລ້ວ ເພິ່ນກ່າວແກ່ຢູ-
ດາ ແລະ ເຢຣູຊາເລັມ ວ່າ "ທ່ານທັງຫລາຍຈົ່ງນະມັດສະການຕໍ່ໜ້າແທ່ນບູຊານີ້" 8ບັດນີ້ ມາແມ
ມາເຮັດສັນຍາກັນກັບກະສັດ ແຫ່ງ ອັດຊີເຣຍ ນາຍຂອງຂ້ອຍ ເຮົາຈະໃຫ້ມ້າສອງພັນໂຕແກ່ເຈົ້າ
ຖ້າຝ່າຍເຈົ້າຫາຄົນທີ່ຂີ່ມ້າເຫລົ່ານັ້ນໄດ້ 9ແລ້ວຢ່າງນັ້ນ ເຈົ້າຈະຂັບໄລ່ນາຍກອງ ແຕ່ພຽງຄົນດຽວ
ໃນໝູ່ຂ້າລາຊະການຜູ້ນ້ອຍທີ່ສຸດຂອງນາຍຂອງ ເຮົາໄດ້ຢ່າງໃດ ແຕ່ເຈົ້າຍັງວາງໃຈເພິ່ງ ເອຢິບ
ເພື່ອລົດຮົບ ແລະ ເພື່ອທະຫານມ້າ 10ຫລາຍກວ່ານັ້ນອີກ ທີ່ເຮົາມາຕໍ່ສູ້ແຜ່ນດິນນີ້ເພື່ອທຳລາຍ
ເຮົາກໍຂຶ້ນມາໂດຍປາດສະຈາກ ພຣະຜູ້ເປັນເຈົ້າບໍ່ແມ່ນບໍ ພຣະຜູ້ເປັນເຈົ້າບອກແກ່ຂ້າພະເຈົ້າວ່າ
'ຈົ່ງຂຶ້ນໄປຕໍ່ສູ້ແຜ່ນດິນນີ້ ແລະທຳລາຍເສຍ'"

11ແລ້ວ ເອລີຢາກິມ ເຊັບນາ ແລະ ໂຢອາ ບອກຣັບຊາເກວ່າ "ຂໍເວົ້າກັບຜູ້ຮັບໃຊ້ຂອງທ່ານ
ເປັນພາສາ ອາຣາມ ເພາະວ່າເຮົາເຂົ້າໃຈພາສານັ້ນ ຂໍຢ່າເວົ້າກັບເຮົາເປັນພາສາ ເຮັບເຣີໃຫ້ປະ-
ຊາຊົນຜູ້ຢູ່ເທິງກຳແພງນັ້ນໄດ້ຍິນເລີຍ" 12ແຕ່ຣັບຊາເກກ່າວວ່າ "ນາຍຂອງຂ້ອຍໃຊ້ໃຫ້ມາເວົ້າ
ຖ້ອຍຄຳເຫລົ່ານີ້ແກ່ນາຍຂອງ ເຈົ້າແລະແກ່ເຈົ້າ ແລະບໍ່ໃຫ້ເວົ້າກັບຄົນທີ່ນັ່ງຢູ່ເທິງກຳແພງ ຜູ້ທີ່
ຈະຕ້ອງກິນຂີ້ແລະດື່ມຍ່ຽວຂອງຕົນພ້ອມກັບເຈົ້າແນວນັ້ນບໍ"

13ແລ້ວ ຣັບຊາເກ ໄດ້ຢືນຮ້ອງສຽງດັງ ເປັນພາສາ ເຮັບເຣີ ວ່າ "ຈົ່ງຟັງຖ້ອຍຄຳຂອງພະມະຫາ
ກະສັດ ຄືກະສັດ ແຫ່ງ ອັດຊີເຣຍ 14ກະສັດບອກດັ່ງນີ້ວ່າ 'ຢ່າໃຫ້ ເຮເຊກີຢາ ຫລອກລວງ ເຈົ້າ
ເພາະວ່າລາວບໍ່ສາມາດທີ່ຈະຊ່ວຍ ເຈົ້າໃຫ້ພົ້ນ 15ຢ່າໃຫ້ ເຮເຊກີຢາ ເຮັດໃຫ້ເຈົ້າວາງໃຈໃນ ພຣະ-

ຜູ້ເປັນເຈົ້າ ໂດຍກ່າວວ່າ "ພຣະຜູ້ເປັນເຈົ້າ ຈະຊ່ວຍເຮົາໃຫ້ພົ້ນແນ່ນອນ ຈະບໍ່ມອບເມືອງນີ້ໄວ້
ໃນມືຂອງກະສັດ ແຫ່ງ ອັດຊີເຣຍ"' [16]ຢ່າຟັງ ເຮເຊກີຢາ ເພາະວ່າກະສັດ ແຫ່ງ ອັດຊີເຣຍ ບອກ
ດັ່ງນີ້ວ່າ 'ຈົ່ງເຮັດສັນຍາສັນຕິພາບກັບເຮົາດ້ວຍຂອງກຳນັນ ແລະອອກມາຫາເຮົາ ແລ້ວທຸກຄົນ
ຈະໄດ້ກິນຈາກເຄືອອະງຸ່ນຂອງຕົນ ແລະທຸກຄົນຈະໄດ້ກິນຈາກຕົ້ນໝາກເດື່ອຂອງຕົນ ແລະທຸກ
ຄົນຈະດື່ມນໍ້າຈາກບ່ອນເກັບນໍ້າຂອງຕົນ [17]ຈົນເຮົາຈະມານຳເຈົ້າໄປແຜ່ນດິນ ຄືແຜ່ນດິນຂອງ
ເຈົ້າເອງ ເປັນແຜ່ນດິນທີ່ມີເຂົ້າ ແລະນໍ້າອະງຸ່ນ ແຜ່ນດິນທີ່ມີເຂົ້າຈີ່ ແລະສວນອະງຸ່ນ [18]ຈົ່ງລະ-
ວັງ ເຮເຊກີຢາ ຈະນຳເຈົ້າຜິດໄປ ໂດຍກ່າວວ່າ "ພຣະຜູ້ເປັນເຈົ້າ ຈະຊ່ວຍ ເຮົາທັງຫລາຍ ໃຫ້ພົ້ນ"
ມີພະ ຂອງບັນດາປະຊາຊາດອົງ ໃດ ເຄີຍຊ່ວຍ ແຜ່ນດິນ ຂອງ ຕົນ ໃຫ້ພົ້ນ ຈາກມືຂອງກະສັດ ຂອງ
ອັດຊີເຣຍ ໄດ້ແດ່ [19]ພະຂອງ ເມືອງ ຮາມັດ ແລະເມືອງ ອາປາດ ຢູ່ໃສ ພະຂອງ ເມືອງ ເສຟາວາ-
ຢິມ ຢູ່ໃສ ພວກເຂົາໄດ້ຊ່ວຍ ຊາມາເຣຍ ໃຫ້ພົ້ນຈາກມືຂອງເຮົາບໍ [20]ພະອົງໃດໃນບັນດາພະທັງ-
ຫລາຍຂອງປະເທດເຫລົ່ານີ້ໄດ້ຊ່ວຍປະເທດຂອງຕົນໃຫ້ພົ້ນຈາກມືຂອງເຮົາ ແລ້ວ ພຣະຜູ້ເປັນ-
ເຈົ້າ ຈະຊ່ວຍ ເຢຣູຊາເລັມ ໃຫ້ພົ້ນຈາກມືຂອງເຮົາບໍ'" [21]ແຕ່ພວກເຂົາທັງຫລາຍມິດ ບໍ່ຕອບລາວ
ຈັກຄຳດຽວ ເພາະວ່າພະບັນຊາຂອງກະສັດມີວ່າ "ຢ່າຕອບລາວເລີຍ"

## ເຮເຊກີຢາຟັງຄຳຂູ່ເຂັນຂອງຣັບຊາເກ

[22]ແລ້ວ ເອລີຢາກີມ ລູກຊາຍ ຮິນກີຢາ ຜູ້ບັນຊາການລາຊະສຳນັກ ແລະ ເຊັບນາ ລາຊະເລ-
ຂາ ແລະ ໂຢອາ ລູກຊາຍ ອາສັບ ຜູ້ບັນຊາການ ໄດ້ເຂົ້າເຝົ້າ ເຮເຊກີຢາ ດ້ວຍເສື້ອຜ້າຈີກຂາດ
ແລະກາບທູນຕອບຖ້ອຍຄຳຂອງ ຣັບຊາເກ

# ບົດທີ 37

[1]ຕໍ່ມາເມື່ອກະສັດ ເຮເຊກີຢາ ໄດ້ຍິນ ພະອົງກໍຈີກເສື້ອຜ້າຂອງພະອົງ ແລະເອົາຜ້າກະສອບ
ຫົ່ມພະອົງ ແລະສະເດັດເຂົ້າໃນພຣະວິຫານຂອງ ພຣະຜູ້ເປັນເຈົ້າ [2]ແລະພະອົງໃຊ້ ເອລີຢາກີມ
ຜູ້ບັນຊາການລາຊະສຳນັກ ແລະ ເຊັບນາ ລາຊະເລຂາ ແລະພວກປະໂລຫິດໃຫຍ່ປົກຕົວດ້ວຍ
ຜ້າກະສອບ ໄປຫາ ເອຊາຢາ ຜູ້ທຳນວຍ ລູກຊາຍຂອງ ອາໂມດ [3]ພວກເຂົາທັງຫລາຍຮຽນເພິ່ນ
ວ່າ "ເຮເຊກີຢາ ບອກດັ່ງນີ້ວ່າ 'ມື້ນີ້ເປັນມື້ທຸກໃຈ ມື້ຖືກຕິຕຽນ ແລະໝິ່ນປະໝາດ ເດັກນ້ອຍກໍ
ເຖິງກຳນົດເກີດ ແຕ່ບໍ່ມີກຳລັງເບັ່ງໃຫ້ເກີດ [4]ເຫດວ່າ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງທ່ານຄົງຈະ
ສະດັບຟັງຖ້ອຍຄຳຂອງ ຣັບຊາເກ ຜູ້ຊຶ່ງກະສັດ ແຫ່ງ ອັດຊີເຣຍ ນາຍຂອງລາວໄດ້ສັ່ງມາ ໃຫ້
ເຢາະເຍີ້ຍ ພຣະເຈົ້າ ຜູ້ມີພຣະຊົນຢູ່ ແລະຕິຕຽນຖ້ອຍຄຳຊຶ່ງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງ ທ່ານ
ໄດ້ສະດັບຟັງ ເຫດສັນນັ້ນ ຂໍທ່ານຖວາຍຄຳອະທິຖານເພື່ອສ່ວນຄົນທີ່ເຫລືອຢູ່ນີ້'"

## ເອຊາຢາສັນຍາວ່າພຣະເຈົ້າຈະຊ່ວຍເຫລືອຢູດາ

[5]ດັ່ງນັ້ນ ຂ້າລາຊະການຂອງກະສັດ ເຮເຊກີຢາ ມາເຖິງ ເອຊາຢາ [6]ເອຊາຢາ ກໍບອກພວກເຂົາ
ທັງຫລາຍວ່າ "ຈົ່ງທູນຕອບນາຍຂອງທ່ານວ່າ ພຣະຜູ້ເປັນເຈົ້າ ບອກດັ່ງນີ້ວ່າ 'ຢ່າຢ້ານ ເພາະ-
ວ່າຖ້ອຍຄຳທີ່ເຈົ້າໄດ້ຍິນນັ້ນ ຊຶ່ງຂ້າລາຊະການຂອງກະສັດແຫ່ງ ອັດຊີເຣຍ ໄດ້ກ່າວກໍຫຍາບຄາຍ
ຕໍ່ເຮົາ [7]ເບິ່ງແມ ເຮົາຈະບັນຈຸຈິດໃຈຢ່າງໜຶ່ງໃນລາວ ເພື່ອລາວຈະໄດ້ຍິນຂ່າວລື ແລະກັບໄປ

ຍັງແຜ່ນດິນຂອງລາວ ເຮົາຈະໃຫ້ລາວລົ້ມລົງດ້ວຍດາບໃນແຜ່ນດິນຂອງລາວເອງ’”

## ເສັນນາເກຣິບໝິ່ນປະໝາດພຣະເຈົ້າຂອງເຮເຊກີຢາ

[8]ຣັບຊາເກ ໄດ້ກັບໄປ ແລະໄດ້ພົບກະສັດແຫ່ງ ອັດຊີເຣຍ ສູ້ຮົບເມືອງ ລິບນາ ເພາະລາວໄດ້
ຍິນວ່າກະສັດອອກຈາກ ລາກິດ ແລ້ວ [9]ພະອົງໄດ້ຍິນກ່ຽວກັບ ຕີຣາກາ ກະສັດແຫ່ງ ເອທິໂອເປຍ
ກ່າວວ່າ “ລາວໄດ້ອອກມາສູ້ຮົບກັບພະອົງແລ້ວ” ແລະເມື່ອພະອົງໄດ້ຍິນຂ່າວແລ້ວ ຈຶ່ງສົ່ງຜູ້ສື່-
ສານໄປເຝົ້າ ເຮເຊກີຢາ ທູນຕອບວ່າ [10]“ເຈົ້າຈົ່ງເວົ້າກັບ ເຮເຊກີຢາ ກະສັດແຫ່ງ ຢູດາ ດັ່ງນີ້ວ່າ
‘ຢ່າໃຫ້ພຣະເຈົ້າຂອງທ່ານ ຊຶ່ງທ່ານວາງໃຈນັ້ນຫລອກລວງທ່ານວ່າ “ເຢຣູຊາເລັມຈະບໍ່ໄດ້ຖືກ
ມອບໄວ້ໃນມືຂອງກະສັດແຫ່ງອັດຊີເຣຍ” [11]ເບິ່ງແມ ທ່ານໄດ້ຍິນແລ້ວວ່າ ບັນດາກະສັດແຫ່ງ
ອັດຊີເຣຍໄດ້ກະທຳອັນໃດກັບແຜ່ນດິນທັງຫລາຍ ຄືທຳລາຍໝົດຢ່າງເດັດຂາດ ສ່ວນທ່ານເອງ
ຈະຮັບການຊ່ວຍໃຫ້ພົ້ນບໍ [12]ບັນດາພະຂອງບັນດາປະຊາຊາດໄດ້ຊ່ວຍເຂົາໃຫ້ລອດພົ້ນໄດ້ບໍ ຄື
ປະຊາຊາດຊຶ່ງບັນພະບູລຸດຂອງເຮົາ ໄດ້ທຳລາຍ ຄືໂກຊານ ຮາຣານ ເຣເຊັບ ແລະປະຊາຊົນ
ເອເດັນຊຶ່ງຢູ່ໃນ ເຕລັດຊາ [13]ກະສັດຂອງຮາມັດ ກະສັດຂອງອາປາດ ກະສັດຂອງເມືອງເສ-
ຟາວາຢິມ ເຮນາ ແລະອີວາຢູ່ໃສ’”

## ເຮເຊກີຢາອະທິຖານ

[14]ເຮເຊກີຢາ ໄດ້ຮັບຈົດໝາຍຈາກມືຜູ້ສົ່ງຂ່າວ ແລະອ່ານ ແລ້ວເຮເຊກີຢາໄດ້ຂຶ້ນໄປຍັງ
ພຣະວິຫານຂອງພຣະຜູ້ເປັນເຈົ້າ ແລະເປີດຈົດໝາຍນັ້ນອອກຕໍ່ເບື້ອງພຣະພັກພຣະຜູ້ເປັນເຈົ້າ
[15]ເຮເຊກີຢາອະທິຖານຕໍ່ພຣະຜູ້ເປັນເຈົ້າວ່າ [16]“ຂ້າແດ່ພຣະຜູ້ເປັນເຈົ້າແຫ່ງຈັກກະວານ ພຣະ-
ເຈົ້າແຫ່ງ ອິສຣາເອນ ຜູ້ປະທັບລະຫວ່າງພວກເຄຣຸບ ພຣະອົງເປັນພຣະເຈົ້າແຫ່ງບັນດາລາຊະ
ອານາຈັກຂອງແຜ່ນດິນໂລກ ພຣະອົງແຕ່ອົງດຽວ ພຣະອົງໄດ້ສ້າງຟ້າສະຫວັນແລະແຜ່ນດິນ
ໂລກ [17]ຂ້າແດ່ພຣະຜູ້ເປັນເຈົ້າຂໍຫງ່ຽງພຣະກັນຟັງ ຂ້າແດ່ພຣະຜູ້ເປັນເຈົ້າ ຂໍເປີດຕາ ແລະຂໍ
ຟັງບັນດາຖ້ອຍຄຳຂອງ ເສັນນາເກຣິບ ຊຶ່ງລາວໄດ້ໃຊ້ມາເຍາະເຍີ້ຍພຣະເຈົ້າຜູ້ມີພຣະຊົນຢູ່
[18]ຂ້າແດ່ພຣະຜູ້ເປັນເຈົ້າ ເປັນຄວາມຈິງທີ່ບັນດາກະສັດແຫ່ງ ອັດຊີເຣຍ ໄດ້ກະທຳແກ່ປະເທດ
ທັງຫລາຍ ແລະແຜ່ນດິນຂອງພວກເຂົານັ້ນຮ້າງເປົ່າ [19]ແລະໄດ້ຖິ້ມພະຂອງປະຊາຊາດນັ້ນເຂົ້າ
ໄຟ ເພາະວ່າມັນບໍ່ແມ່ນພະ ເປັນແຕ່ຜົນງານຂອງມືມະນຸດ ເປັນໄມ້ແລະຫີນ ເຫດສັນນັ້ນ ມັນ
ຈຶ່ງຖືກທຳລາຍເສຍ [20]ສະນັ້ນບັດນີ້ ຂ້າແດ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງຂ້າພະອົງທັງຫລາຍ
ຂໍຊ່ວຍຂ້າພະອົງໃຫ້ພົ້ນມືຂອງພວກເຂົາ ເພື່ອລາຊະອານາຈັກທັງໝົດແຫ່ງແຜ່ນດິນໂລກຈະຮູ້
ວ່າ ພຣະອົງເປັນພຣະຜູ້ເປັນເຈົ້າແຕ່ພຣະອົງດຽວ”

## ພຣະເຈົ້າສັນຍາວ່າຈະຊ່ວຍຢູດາໃຫ້ພົ້ນຈາກເສັນນາເກຣິບ

[21]ແລ້ວ ເອຊາຢາ ລູກຊາຍຂອງ ອາໂມດ ໄດ້ໃຊ້ໃຫ້ໄປເຝົ້າ ເຮເຊກີຢາທູນຕອບວ່າ
“ພຣະຜູ້ເປັນເຈົ້າພຣະເຈົ້າຂອງ ອິສຣາເອນບອກດັ່ງນີ້ວ່າ
ເພາະວ່າເຈົ້າໄດ້ອະທິຖານຕໍ່ເຮົາກ່ຽວກັບ ເສັນນາເກຣິບກະສັດແຫ່ງອັດຊີເຣຍ
[22] ຕໍ່ໄປນີ້ເປັນຖ້ອຍຄຳຊຶ່ງ ພຣະຜູ້ເປັນເຈົ້າບອກກ່ຽວກັບລາວວ່າ
‘ຍິງສາວພົມມະຈາລີລູກຊີໂອນປະໝາດເຈົ້າ ແລະເຍາະເຍີ້ຍເຈົ້າ

ລູກສາວ ເຢຣູຊາເລັມ ສັ່ນຫົວຕາມຫລັງໃສ່ເຈົ້າ
23 ເຈົ້າເຍາະເຍີ້ຍ ແລະກ່າວຫຍາບຄາຍຕໍ່ຜູ້ໃດ ເຈົ້າຂຶ້ນສຽງຂອງເຈົ້າຕໍ່ຜູ້ໃດ
ແລະເບິ່ງຕາຂອງເຈົ້າຢ່າງຈອງຫອງຕໍ່ຜູ້ໃດ ຕໍ່ອົງບໍລິສຸດຂອງ ອິສຣາເອນ
24 ເຈົ້າໄດ້ເຍາະເຍີ້ຍອົງ ພຣະຜູ້ເປັນເຈົ້າ ດ້ວຍຜູ້ຮັບໃຊ້ຂອງເຈົ້າ
ແລະເຈົ້າໄດ້ເວົ້າວ່າ "ດ້ວຍລົດຮົບເປັນຈຳນວນຫລາຍຂອງຂ້ອຍ
ຂ້ອຍໄດ້ຂຶ້ນບ່ອນສູງຂອງພູເຂົາ ເຖິງບ່ອນໄກສຸດຂອງ ເລບານອນ
ຂ້ອຍຈະປ້ຳຕົ້ນສົນທີ່ສູງທີ່ສຸດຂອງມັນລົງ ທັງຕົ້ນແປກທີ່ດີທີ່ສຸດຂອງມັນ
ຂ້ອຍຈະເຂົ້າໄປໃນຍອດສຸດທີ່ສຸດໃນຊາຍແດນຂອງມັນ ທີ່ປ່າໄມ້ແຫ່ງ ກາເມນ
25 ຂ້ອຍຂຸດບໍ່ນ້ຳ ແລະດື່ມນ້ຳ ຂ້ອຍໄດ້ເອົາຝາຕີນຂອງຂ້ອຍ
ກວາດແມ່ນ້ຳທັງໝົດຂອງສະຖານທີ່ທີ່ຖືກລ້ອມໂຈມຕີໃຫ້ແຫ້ງໄປ"
26 ເຈົ້າບໍ່ໄດ້ຍິນບໍວ່າ ເຮົາໄດ້ຈັດໄວ້ດົນແລ້ວ ເຮົາໄດ້ວາງແຜນງານໄວ້ແຕ່ດຶກດຳບັນ
ຊຶ່ງໃນບັດນີ້ເຮົາໃຫ້ເປັນໄປແລ້ວ
ຄືເຈົ້າຈະເຮັດໃຫ້ເມືອງທີ່ມີປ້ອມພັງລົງ ໃຫ້ເປັນກອງສິ່ງເພພັງ
27 ສ່ວນຊາວເມືອງນັ້ນມີອຳນາດນ້ອຍ ພວກເຂົາຕົກໃຈຢ້ານ ແລະອັບອາຍ
ພວກເຂົາຄືກັບຫຍ້າໃນທົ່ງນາ ແລະຄືກັບຫຍ້າອ່ອນ ຄືຫຍ້າທີ່ຢູ່ເທິງຫລັງຄາເຮືອນ
ພວກມັນຫ່ຽວແຫ້ງໄປກ່ອນທີ່ມັນຈະງອກງາມແນວນັ້ນ
28 ແຕ່ເຮົາຮູ້ຈັກການທີ່ເຈົ້ານັ່ງລົງກັບການອອກໄປ ແລະເຂົ້າມາຂອງເຈົ້າ
ແລະການຮ້າຍຂອງເຈົ້າຕໍ່ເຮົາ
29 ເພາະວ່າເຈົ້າໄດ້ຮ້າຍຕໍ່ເຮົາ ແລະຄວາມຈອງຫອງຂອງເຈົ້າໄດ້ມາເຂົ້າຫູຂອງເຮົາ
ສະນັ້ນ ເຮົາຈະເອົາຂໍຂອງເຮົາເກາະດັງເຈົ້າ ແລະບັງຫຽນຂອງເຮົາໃສ່ຮີມສົບເຈົ້າ
ແລະເຮົາຈະຫັນເຈົ້າກັບໄປຕາມທາງຊຶ່ງເຈົ້າມານັ້ນ

30ແລະນີ້ຈະເປັນໝາຍສຳຄັນແກ່ເຈົ້າ ຄືປີນີ້ເຈົ້າຈະກິນສິ່ງທີ່ປົ່ງຂຶ້ນເອງ ແລະໃນປີທີສອງສິ່ງ
ທີ່ປົ່ງຈາກໂຕເກົ່າ ແລ້ວໃນປີທີສາມ ຈົ່ງຫວ່ານ ແລະກ່ຽວ ແລະເຮັດສວນອະງຸ່ນ ແລະກິນຜົນ
ຂອງມັນ 31ສ່ວນທີ່ລອດ ແລະເຫລືອຂອງວົງວານຂອງ ຢູດາ ຈະຢັ່ງຮາກລົງໄປ ແລະເກີດຜົນ
ຂຶ້ນເທິງ 32ເພາະວ່າສ່ວນຄົນທີ່ເຫລືອຈະອອກໄປຈາກ ເຢຣູຊາເລັມ ແລະສ່ວນທີ່ລອດມາ ຈະ
ອອກມາຈາກພູເຂົາ ຊີໂອນ ຄວາມກະຕືລືລົ້ນຂອງ ພຣະຜູ້ເປັນເຈົ້າ ແຫ່ງຈັກກະວານ ຈະກະທຳ
ການນີ້'

33ເຫດສັນນັ້ນ ພຣະຜູ້ເປັນເຈົ້າ ຈຶ່ງບອກກ່ຽວກັບກະສັດ ແຫ່ງ ອັດຊີເຣຍ ດັ່ງນີ້ວ່າ 'ລາວຈະບໍ່
ເຂົ້າໃນນະຄອນນີ້ ຫລືຍິງລູກທະນູໄປຫັ້ນ ຫລືຖືໂລ່ເຂົ້າມາຕໍ່ໜ້ານະຄອນ ຫລືສ້າງທຳຄອຍຕໍ່ສູ້
ມັນ 34ລາວມາທາງໃດ ລາວຈະຕ້ອງກັບໄປທາງນັ້ນ ລາວຈະບໍ່ເຂົ້າມາໃນນະຄອນນີ້ ພຣະຜູ້-
ເປັນເຈົ້າ ບອກດັ່ງນີ້ແຫລະ 35ເພາະວ່າເຮົາຈະປ້ອງກັນນະຄອນນີ້ໄວ້ເພື່ອໃຫ້ລອດພົ້ນ ເພື່ອ
ເຫັນແກ່ເຮົາເອງ ແລະເຫັນແກ່ດາວິດຜູ້ຮັບໃຊ້ຂອງເຮົາ'"

36ທູດສະຫວັນຂອງ ພຣະຜູ້ເປັນເຈົ້າ ຈຶ່ງໄດ້ອອກໄປ ແລະໄດ້ປະຫານຄົນໃນຄ້າຍຂອງຄົນ

ອັດຊີເຣຍ ໜຶ່ງແສນແປດໝື່ນຫ້າພັນຄົນ ແລະເມື່ອຄົນລຸກຂຶ້ນໃນຕອນເຊົ້າມືດ ເບິ່ງແມ ຄົນ
ເຫລົ່ານັ້ນກາຍເປັນສົບໝົດ 37ແລ້ວ ເສັນນາເກຣິບ ກະສັດ ແຫ່ງ ອັດຊີເຣຍ ກໍໄດ້ຍົກໄປແລະກັບ
ບ້ານ ແລະຢູ່ໃນ ນີເນເວ 38ຕໍ່ມາເມື່ອເພິ່ນນະມັດສະການໃນວິຫານຂອງ ພະນິດສະໂຣກ ພະຂອງ
ເພິ່ນ ອັດຣຳເມເລັກ ແລະຊາເຣັດເຊ ລູກຂອງເພິ່ນ ກໍປະຫານເພິ່ນດ້ວຍດາບ ແລະໜີໄປຍັງ
ແຜ່ນດິນ ອາຣາຣັດ ແລະ ເອຊາຣັດໂດນ ລູກຂອງເພິ່ນຂຶ້ນປົກຄອງແທນ

# ບົດທີ 38

## ເຮເຊກີຢາປ່ວຍ ແລະຟື້ນຈາກການເຈັບປ່ວຍນັ້ນ

1ໃນມື້ເຫລົ່ານັ້ນ ເຮເຊກີຢາປ່ວຍໃກ້ຈະຕາຍ ແລະ ເອຊາຢາຜູ້ທຳນວຍລູກຊາຍຂອງ ອາໂມດ
ເຂົ້າມາເຝົ້າພະອົງ ແລະທູນຕອບພະອົງວ່າ “ພຣະຜູ້ເປັນເຈົ້າບອກດັ່ງນີ້ວ່າ ຈົ່ງຈັດການການ-
ບ້ານການເມືອງໃຫ້ຮຽບຮ້ອຍ ເຈົ້າຈະຕ້ອງຕາຍ ເຈົ້າຈະບໍ່ຟື້ນ” 2ແລ້ວ ເຮເຊກີຢາ ຫັນໜ້າ ເຂົ້າ
ຂ້າງຝາ ແລະອະທິຖານຕໍ່ ພຣະຜູ້ເປັນເຈົ້າ 3ວ່າ “ຂ້າແດ່ ພຣະຜູ້ເປັນເຈົ້າ ຂໍໂຜດລະນຶກເຖິງວ່າ
ຂ້າພະອົງໄດ້ດຳເນີນຢູ່ຕໍ່ພຣະພັກພຣະອົງ ດ້ວຍຄວາມຈິງແລະສິ້ນສຸດໃຈ ແລະໄດ້ກະທຳສິ່ງທີ່ດີ
ໃນສາຍພຣະເນດຂອງພຣະອົງ” ແລ້ວ ເຮເຊກີຢາ ກໍຮ້ອງໄຫ້ຫລາຍຂຶ້ນ

4ແລ້ວຖ້ອຍຄຳຂອງ ພຣະຜູ້ເປັນເຈົ້າ ກໍມາເຖິງ ເອຊາຢາ ວ່າ 5“ຈົ່ງໄປບອກ ເຮເຊກີຢາ ວ່າ
ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງ ດາວິດ ບັນພະບູລຸດຂອງເຈົ້າບອກດັ່ງນີ້ວ່າ ເຮົາໄດ້ຍິນຄຳອະທິ-
ຖານຂອງເຈົ້າແລ້ວ ເຮົາໄດ້ເຫັນນ້ຳຕາຂອງເຈົ້າແລ້ວ ເບິ່ງແມ ເຮົາຈະເພີ່ມເຕີມຊີວິດໃຫ້ເຈົ້າສິບ
ຫ້າປີ 6ເຮົາຈະຊ່ວຍເຈົ້າ ແລະເມືອງນີ້ໃຫ້ພົ້ນຈາກມືຂອງກະສັດ ອັດຊີເຣຍ ແລະຈະປ້ອງກັນ
ເມືອງນີ້ໄວ້

7ອັນນີ້ຈະເປັນໝາຍສຳຄັນສຳລັບພະອົງຈາກ ພຣະຜູ້ເປັນເຈົ້າ ທີ່ ພຣະຜູ້ເປັນເຈົ້າ ຈະກະທຳ
ສິ່ງນີ້ຕາມທີ່ພຣະອົງໄດ້ສັນຍາໄວ້ 8ເບິ່ງແມ ເຮົາຈະເຮັດໃຫ້ເງົາທີ່ຕາເວັນຊ່ອງມາເຖິງໂມງແດດ
ຂອງ ອາຮາດ ຍ້ອນກັບມາສິບຂັ້ນ” ຕາເວັນກໍໄດ້ຍ້ອນກັບມາເຖິງໂມງແດດສິບຂັ້ນ ຕາມຂັ້ນທີ່ໄດ້
ແບ່ງໄວ້

9ບົດປະພັນຂອງ ເຮເຊກີຢາ ກະສັດ ແຫ່ງ ຢູດາ ຫລັງຈາກທີ່ພະອົງໄດ້ປ່ວຍ ແລະຟື້ນຈາກ
ການປ່ວຍຂອງພະອົງນັ້ນ ມີວ່າ

10 ຂ້າພະເຈົ້າກ່າວວ່າ ເມື່ອຊີວິດຂອງຂ້າພະເຈົ້າມາເຖິງກາງຄົນ
ຂ້າພະເຈົ້າຈະໄປຍັງປະຕູແດນຄົນຕາຍ
ຂ້າພະເຈົ້າຕ້ອງຖືກຂ້າຈາກປີທີ່ເຫລືອຢູ່ຂອງຂ້າພະເຈົ້າ
11 ຂ້າພະເຈົ້າກ່າວວ່າ ຂ້າພະເຈົ້າຈະບໍ່ເຫັນ ພຣະຜູ້ເປັນເຈົ້າ
ຄື ພຣະຜູ້ເປັນເຈົ້າ ໃນແຜ່ນດິນຂອງຄົນເປັນ
ຂ້າພະເຈົ້າຈະເບິ່ງບໍ່ເຫັນມະນຸດອີກ ໃນໝູ່ຊາວແຜ່ນດິນໂລກ
12 ຍຸກສະໄໝຂອງຂ້າພະເຈົ້າຖືກຖອນອອກໄປຈາກຂ້າພະເຈົ້າ
ເໝືອນກັບເຕັນຂອງຜູ້ລ້ຽງແກະ

ຂ້າພະເຈົ້າໄດ້ຕັດຊີວິດຂອງຂ້າພະເຈົ້າຄືກັບຄົນຕ່ຳແຜ່ນ
  ພຣະອົງຕັດຂ້າພະເຈົ້າໂດຍພະຍາດ
ພຣະອົງຈະນຳຂ້າພະເຈົ້າມາເຖິງອາວະສານທັງເວັນ ແລະຄືນ
13 ຂ້າພະເຈົ້າໄດ້ພິຈາລະນາຈົນຮຸ່ງເຊົ້າວ່າ
  ພຣະອົງຈະຫັກກະດູກທັງໝົດຂອງຂ້າພະເຈົ້າເໝືອນຢ່າງສິງໃຫຍ່
ພຣະອົງຈະນຳຂ້າພະເຈົ້າມາເຖິງອາວະສານທັງເວັນແລະຄືນ
14 ຂ້າພະເຈົ້າຮ້ອງຄືນົກນາງແອ່ນ ຂ້າພະເຈົ້າຮ້ອງຄືນົກເຂົາ
  ຕາຂອງຂ້າພະເຈົ້າເມື່ອຍອ່ອນເມື່ອເບິ່ງຂຶ້ນຂ້າງເທິງ
ຂ້າແດ່ພຣະຜູ້ເປັນເຈົ້າ ຂ້າພະອົງຖືກບີບບັງຄັບ
  ຂໍພຣະອົງເປັນຜູ້ປະກັນຂອງຂ້າພະອົງ
15 ແຕ່ຂ້າພະເຈົ້າຈະເວົ້າອັນໃດໄດ້ ເພາະວ່າພຣະອົງບອກກັບຂ້າພະເຈົ້າແລ້ວ
  ແລະພຣະອົງເອງໄດ້ກະທຳເຊັ່ນນັ້ນ
ຂ້າພະເຈົ້າກໍຈະດຳເນີນໄປດ້ວຍຄວາມສະຫງົບສະຫງ່ຽມ
  ຕະຫລອດຊີວິດຂອງຂ້າພະເຈົ້າ
ເພາະວ່າຄວາມຂົມຂື່ນຂອງຈິດໃຈຂອງຂ້າພະເຈົ້າ

16 ຂ້າແດ່ອົງພຣະຜູ້ເປັນເຈົ້າ ມະນຸດດຳລົງຊີວິດຢູ່ໄດ້ດ້ວຍສິ່ງເຫລົ່ານີ້
  ແລະຊີວິດແຫ່ງວິນຍານຂອງຂ້າພະອົງກໍຢູ່ໃນບັນດາສິ່ງເຫລົ່ານີ້
ພຣະອົງຈະໃຫ້ຂ້າພະອົງຫາຍດີ ແລະເຮັດໃຫ້ຂ້າພະອົງມີຊີວິດ
17 ເບິ່ງແມ ເພາະວ່າເຫັນແກ່ສັນຕິພາບ ຂ້າພະອົງຈຶ່ງມີຄວາມຂົມຂື່ນຫລາຍຂຶ້ນ
  ແຕ່ພຣະອົງຮັກຊີວິດຂອງຂ້າພະອົງຈຶ່ງໄດ້ຊ່ວຍໃຫ້ພົ້ນຈາກຂຸມຂອງຄວາມຈິບຫາຍ
ເພາະວ່າພຣະອົງຖິ້ມບາບທັງໝົດຂອງຂ້າພະອົງໄວ້ເບື້ອງຫລັງຂອງພຣະອົງ
18 ເພາະວ່າແດນຄົນຕາຍສັນລະເສີນພຣະອົງບໍ່ໄດ້
  ຄວາມມໍລະນາຈະຍົກຍ້ອງພຣະອົງບໍ່ໄດ້
ບັນດາຄົນທີ່ລົງໄປຍັງປາກແດນຄົນຕາຍນັ້ນ
  ຈະຫວັງໃນຄວາມຈິງຂອງພຣະອົງກໍບໍ່ໄດ້
19 ຄົນເປັນ ກໍຈະສັນລະເສີນພຣະອົງ ເໝືອນຢ່າງທີ່ຂ້າພະອົງກະທຳໃນມື້ນີ້
  ພໍ່ຈະໄດ້ສະແດງຄວາມຈິງຂອງພຣະອົງແກ່ລູກຂອງລາວ

20 ພຣະຜູ້ເປັນເຈົ້າ ໄດ້ຊ່ວຍຂ້າພະເຈົ້າໃຫ້ລອດພົ້ນ
  ເຫດສັນນັ້ນ ຂ້າພະເຈົ້າທັງຫລາຍຈະຮ້ອງເພງ
ແລະຫລິ້ນເຄື່ອງສາຍຂອງຂ້າພະເຈົ້າຕະຫລອດວັນເວລາ
  ໃນຊີວິດຂອງຂ້າພະເຈົ້າທັງຫລາຍຢູ່ທີ່ພຣະວິຫານຂອງ ພຣະຜູ້ເປັນເຈົ້າ
21ຝ່າຍ ເອຊາຢາ ໄດ້ກ່າວວ່າ "ໃຫ້ພວກເຂົາເອົາເຂົ້າໜົມໝາກເດື່ອມາແຜ່ນໜຶ່ງ ແລະແປະໄວ້
ທີ່ບາດເພື່ອພະອົງຈະຟື້ນ". 22ເຮເຊກີຢາ ໄດ້ບອກດ້ວຍວ່າ "ອັນໃດຈະເປັນໝາຍສຳຄັນວ່າ ຂ້າ-

ພະເຈົ້າຈະໄດ້ຂຶ້ນໄປຍັງພຣະວິຫານຂອງ ພຣະຜູ້ເປັນເຈົ້າ?"

## ບົດທີ 39

### ເຮເຊກີຢາສະແດງຄັງຊັບທັງໝົດຂອງພະອົງ ໃຫ້ຄົນຈາກບາບີໂລນເຫັນ[ກ]

1ຄາວນັ້ນ ເມໂຣດັກ-ບາລາດານ ລູກຊາຍຂອງ ບາລາດານ ກະສັດແຫ່ງ ບາບີໂລນ ສົ່ງ
ໜັງສື ແລະ ເຄື່ອງບັນນາການມາຍັງ ເຮເຊກີຢາ ເພາະວ່າພະອົງ ໄດ້ຍິນວ່າ ເຮເຊກີຢາ ປ່ວຍ
ແລະຫາຍປ່ວຍແລ້ວ 2ຝ່າຍ ເຮເຊກີຢາ ກໍຊົມຊື່ນຍິນດີຍ້ອນພວກເຂົາເຫລົ່ານັ້ນ ແລະພາພວກ
ເຂົາຊົມຄັງຊັບຂອງພະອົງ ຊົມເງິນຄຳ ເຄື່ອງເທດ ແລະນ້ຳມັນປະເສີດ ແລະຄັງອາວຸດທັງໝົດ
ຂອງພະອົງ ທຸກຢ່າງຊຶ່ງມີໃນຫ້ອງພະຄັງ ບໍ່ມີສິ່ງໃດໃນພະລາຊະວັງ ຫລືໃນລາຊະອານາຈັກ
ທັງໝົດຂອງພຣະອົງທີ່ ເຮເຊກີຢາ ບໍ່ໄດ້ສະແດງ ແກ່ພວກເຂົາ 3ແລ້ວ ເອຊາຢາ ຜູ້ທຳນວຍກໍເຂົ້າ
ເຝົ້າກະສັດ ເຮເຊກີຢາ ແລະທູນຕອບພະອົງວ່າ "ຄົນເຫລົ່ານີ້ທູນຕອບອັນໃດແດ່ ແລະພວກເຂົາ
ມາແຕ່ໃສ ເຂົ້າເຝົ້າພະອົງ" ເຮເຊກີຢາ ບອກວ່າ "ພວກເຂົາໄດ້ມາຫາເຮົາຈາກເມືອງໄກ ຈາກ
ບາບີໂລນ" 4ເພິ່ນທູນຕອບວ່າ "ພວກເຂົາເຫັນອັນໃດໃນພະລາຊະວັງຂອງພະອົງແດ່" ແລະ ເຮ-
ເຊກີຢາ ຕອບວ່າ "ພວກເຂົາເຫັນທຸກຢ່າງໃນວັງຂອງເຮົາ ບໍ່ມີສິ່ງໃດໃນພະຄັງຂອງເຮົາຊຶ່ງເຮົາບໍ່
ໄດ້ສະແດງ ແກ່ພວກເຂົາ"
5ແລ້ວ ເອຊາຢາ ທູນຕອບ ເຮເຊກີຢາ ວ່າ "ຂໍຟັງຖ້ອຍຄຳຂອງ ພຣະຜູ້ເປັນເຈົ້າ ແຫ່ງຈັກກະວານ
6ເບິ່ງແມ ວັນເວລາກຳລັງຍ່າງເຂົ້າມາ ເມື່ອສັບພະສິ່ງທັງໝົດໃນວັງຂອງເຈົ້າ ແລະສິ່ງຊຶ່ງບັນ-
ພະບູລຸດຂອງ ເຈົ້າ ໄດ້ສະສົມຈົນ ເຖິງທຸກມື້ນີ້ຈະຕ້ອງ ຖືກ ເອົາ ໄປຍັງ ບາບີໂລນ ຈະບໍ່ມີສິ່ງໃດ
ເຫລືອເລີຍ ພຣະຜູ້ເປັນເຈົ້າບອກດັ່ງນີ້ແຫລະ 7ແລະລູກບາງຄົນຊຶ່ງຖືກຳເນີດຈາກເຈົ້າ ຜູ້ຊຶ່ງ
ເກີດມາ ແກ່ເຈົ້າຈະຖືກນຳເອົາໄປ ແລະຈະກາຍເປັນຂັນທີໃນວັງຂອງກະສັດ ແຫ່ງ ບາບີໂລນ"
8ແລ້ວ ເຮເຊກີຢາ ບອກກັບ ເອຊາຢາ ວ່າ "ຖ້ອຍຄຳຂອງ ພຣະຜູ້ເປັນເຈົ້າ ຊຶ່ງທ່ານກ່າວນັ້ນກໍດີຢູ່"
ເພາະພະອົງຄິດວ່າ "ຈະມີຄວາມຢູ່ເຢັນເປັນສຸກ ແລະຄວາມຈິງໃນສະໄໝຂອງເຮົານີ້"

## ບົດທີ 40

### ພຣະຄຳທີ່ກ່ຽວກັບຄວາມຫວັງ

1 ພຣະເຈົ້າຂອງພວກເຮົາຊົງກ່າວວ່າ,
ຈົ່ງໂອ້ໂລມ ຈົ່ງໂອ້ໂລມໄພ່ພົນຂອງເຮົາ!
2 ຈົ່ງສະໜັບສະໜູນອູ້ມຊູຊາວ ເຢຣູຊາເລັມ
ໃຫ້ບອກວ່າຄວາມທຸກຍາກທໍລະມານຂອງພວກເຂົານັ້ນບໍ່ມີອີກແລ້ວ
ແລະທີ່ເຮັດບາບນັ້ນກໍໄດ້ຮັບອະໄພໝົດ
ການທີ່ເຮົາໄດ້ລົງໂທດຢ່າງໜັກ ຍ້ອນການກະທຳບາບ

[ກ]2 ກະສັດ 20:12

ຂອງພວກເຂົາເອງນັ້ນໄດ້ຄົບຖ້ວນໝົດແລ້ວ.
3 ສຽງໜຶ່ງຮ້ອງຂຶ້ນວ່າ,
"ຈົ່ງຈັດຕຽມຫົນທາງໄວ້ໃນທະເລຊາຍ ເພື່ອຕ້ອນຮັບ ພຣະຜູ້ເປັນເຈົ້າ
ຈົ່ງປັດກວາດຫົນທາງໃນຖິ່ນແຫ້ງແລ້ງກັນດານໃຫ້ສະອາດ
ເພື່ອຕ້ອນຮັບ ພຣະເຈົ້າ ຂອງພວກເຮົາ.
4 ຮ່ອມພູທຸກໆແຫ່ງຈະຕ້ອງຖົມໃຫ້ເຕັມ
ພູທຸກໆໜ່ວຍຈະຕ້ອງເປັນດິນພຽງ
ເນີນສູງທັງຫລາຍຈະຮາບພຽງໝົດ
ບ່ອນສູງບ່ອນຕໍ່າຈະພຽງສະເໝີກັນ.
5 ແລ້ວພຣະລັດສະໝີຄວາມຍິ່ງໃຫຍ່ຂອງ ພຣະຜູ້ເປັນເຈົ້າ ຈະມາປະກົດ
ມະນຸດໃນໂລກຈະເຫັນກັນທຸກຄົນ
ພຣະຜູ້ເປັນເຈົ້າ ເອງຊົງສັນຍາດັ່ງນີ້."
6 ສຽງໜຶ່ງຮ້ອງຂຶ້ນອີກວ່າ,
"ຈົ່ງປ່າວປະກາດເທີ້ນ"
ຂ້າພະເຈົ້າຈຶ່ງຖາມວ່າ, "ຂ້ອຍຈະປ່າວປະກາດຫຍັງ?"
"ຈົ່ງປ່າວປະກາດວ່າ ມະນຸດທັງປວງເປັນເໝືອນຕົ້ນຫຍ້າ
ອາຍຸຂອງເຂົາກໍບໍ່ໝັ້ນຍືນກວ່າດອກໄມ້ປ່າ.
7 ເມື່ອ ພຣະຜູ້ເປັນເຈົ້າ ຊົງໃຫ້ລົມພັດມາ
ຫຍ້າກໍຫ່ຽວແຫ້ງ ແລະດອກໄມ້ກໍຮ່ວງໂຣຍ
ແລະມະນຸດກໍບໍ່ແຂງແຮງໄປກວ່າຫຍ້າ."
8 ແມ່ນແລ້ວ ຫຍ້າກໍຫ່ຽວແຫ້ງ ແລະດອກໄມ້ກໍຮ່ວງໂຣຍ
ແຕ່ພຣະຄໍາແຫ່ງ ພຣະເຈົ້າ ຂອງເຮົາຈະມີຢູ່ຕະຫລອດໄປ!"
9 ຊາວ ເຢຣູຊາເລັມ ເອີຍ! ຈົ່ງຂຶ້ນໄປເທິງພູສູງ
ປ່າວປະກາດຂ່າວດີນັ້ນ!
ແລະເວົ້າວ່າ ຢ່າຢ້ານເລີຍ
ຈົ່ງບອກຫົວເມືອງຂອງຢູດາວ່າ
ພຣະເຈົ້າ ຂອງເຈົ້າຈະສະເດັດມາ!
10 ພຣະຜູ້ເປັນເຈົ້າ ຈະສະເດັດມາປົກຄອງໄພ່ພົນດ້ວຍລິດທານຸພາບ
ພ້ອມທັງນໍາປະຊາຊົນທີ່ພຣະອົງຊົງຊ່ອຍຊີວິດໃຫ້ລອດພົ້ນນັ້ນມາພ້ອມ.
11 ພຣະອົງຊົງລ້ຽງຝູງສັດຂອງພຣະອົງເໝືອນຄົນລ້ຽງແກະ
ຈະຊົງຮວບຮວມເອົາລູກແກະ ແລະອູ້ມມັນໄວ້
ຈະຊົງນໍາແມ່ມັນໄປຄ່ອຍໆຢ່າງຖະນຸຖະໜອມ.

## ຄວາມຍິ່ງໃຫຍ່ຂອງອົງພຣະຜູ້ເປັນເຈົ້າ

12 ໃຜສາມາດຫອບເອົານໍ້າມະຫາສະໝຸດທັງໝົດມາຊັ່ງເບິ່ງໄດ້?
ຫລືແທກທ້ອງຟ້າໄດ້ດ້ວຍມືຄືບດຽວ?
ຄົນໃດແດ່ ສາມາດເອົາດິນທັງໝົດໃນໂລກນີ້ໃສ່ກະລຸມດຽວໄດ້?
ຫລືເອົາພູ ແລະໂນນຂຶ້ນຊັ່ງເທິງຊີງໄດ້?
13 ຄົນໃດແດ່ ສາມາດບອກໃຫ້ພຣະຜູ້ເປັນເຈົ້າ ເຮັດຢ່າງໃດຢ່າງໜຶ່ງໄດ້?
ໃຜສາມາດສອນ ຫລືແນະນຳພຣະອົງໄດ້?
14 ພຣະເຈົ້າຊົງປຶກສາຜູ້ໃດແດ່ ພຣະອົງຈຶ່ງຮູ້ຈັກ ແລະເຂົ້າໃຈ?
ໃຜສອນພຣະອົງໃຫ້ມີຄວາມສະຫລຽວສະຫລາດ ມີສະຕິປັນຍາ ແລະຄວາມ
ຍຸດຕິທຳຈຶ່ງກະທຳສິ່ງທັງຫລາຍນີ້ໄດ້?
15 ພຣະຜູ້ເປັນເຈົ້າຊົງຖືວ່າຊົນຊາດທັງຫລາຍບໍ່ສຳຄັນຫຍັງ
ພວກເຂົາບໍ່ສຳຄັນເທົ່ານໍ້າເມັດໜຶ່ງຊໍ້າ
ປະເທດຫ່າງໄກທັງຫລາຍກໍເບົາເທົ່າກັບຝຸ່ນເມັດໜຶ່ງ.
16 ແມ່ນແຕ່ສັດທັງໝົດໃນປ່າເລບານອນ
ກໍບໍ່ພໍສຳລັບເຜົາບູຊາພຣະເຈົ້າຂອງເຮົາ
ແລະໄມ້ໃນປ່ານັ້ນກໍໜ້ອຍໂພດສຳລັບດັງໄຟ.
17 ຊົນຊາດທັງຫລາຍ ກໍບໍ່ສຳຄັນເລີຍສຳລັບພຣະອົງ.
18 ທ່ານຈະປຽບພຣະເຈົ້າໃສ່ຫຍັງ?
ພຣະອົງມີລັກສະນະຢ່າງໃດ?
19 ພຣະອົງບໍ່ເໝືອນຮູບເຄົາລົບທີ່ຄົນເຮັດຂຶ້ນ
ຮູບນັ້ນນາຍຊ່າງເອົາຄຳໂອບ
ແລະຕົກແຕ່ງດ້ວຍເງິນ.
20 ຜູ້ທີ່ບໍ່ມີເງິນ ແລະຄຳ
ກໍເລືອກເອົາໄມ້ແນວດີ
ແລ້ວຫາເອົານາຍຊ່າງຜູ້ຊຳນານ
ມາປະດິດຄິດແຕ່ງໃຫ້ເປັນຮູບທີ່ບໍ່ເໜັງຕີງ.
21 ພວກທ່ານບໍ່ຮູ້ບໍ? ບໍ່ເຄີຍໄດ້ຍິນບໍ?
ແຕ່ກ່ອນໆ ມາບໍ່ມີຜູ້ໃດບອກບໍ?
ທ່ານເຄີຍໄດ້ຍິນການເລີ່ມຕົ້ນສ້າງໂລກບໍ?
22 ໂລກນັ້ນກໍສ້າງໂດຍພຣະອົງຜູ້ຊົງປະທັບເທິງບັນລັງ
ຊຶ່ງຢູ່ເໜືອໂລກ ແລະເທິງທ້ອງຟ້າ
ມະນຸດສະໂລກເບື້ອງລຸ່ມກໍນ້ອຍເທົ່າມົດ!
ພຣະອົງຊົງກາງທ້ອງຟ້າອອກເໝືອນກາງຜ້າກັ້ງ

ເໝືອນກາງຜ້າເຕັນໃຫ້ຄົນຢູ່ອາໄສ.
23 ຊົງເຮັດໃຫ້ຜູ້ປົກຄອງໝົດອຳນາດ
ແລະບໍ່ໃຫ້ມີຄວາມໝາຍຫຍັງໝົດ.
24 ພວກເຂົາເປັນເໝືອນຫຍ້າອ່ອນ
ພໍແຕ່ຫວ່ານລົງແລະປົ່ງຮາກ
ພຣະຜູ້ເປັນເຈົ້າກໍໃຫ້ລົມພັດມາ
ພວກເຂົາຈຶ່ງຫ່ຽວແຫ້ງ ແລະປິວໄປເໝືອນເຟືອງ.
25 ພຣະຜູ້ເປັນເຈົ້າອົງບໍລິສຸດຊົງຖາມວ່າ
ຈະປຽບທຽບຜູ້ໃດໃສ່ເຮົາ?
ມີຜູ້ໃດແດ່ເໝືອນເຮົາ.
26 ຈົ່ງແຫງນໜ້າຂຶ້ນເບິ່ງຟ້າດູ!
ຜູ້ໃດສ້າງດາວທັງຫລາຍທີ່ທ່ານເຫັນນີ້?
ພຣະອົງຜູ້ຊົງນຳມັນອອກມາເໝືອນຂະບວນກອງທັບ
ຊົງຮູ້ຈັກວ່າມັນມີຫລາຍປານໃດ
ແລະຊົງຕັ້ງຊື່ໃຫ້ມັນທຸກໆ ດວງ!
ດ້ວຍລິດທານຸພາບອັນຍິ່ງໃຫຍ່ຂອງພຣະອົງນັ້ນ
ຈຶ່ງບໍ່ມີຈັກດວງສູນເສຍໄປ!
27 ອິສຣາເອນ ເອີຍ! ເປັນຫຍັງເຈົ້າຈຶ່ງຈົ່ມວ່າ
ພຣະຜູ້ເປັນເຈົ້າບໍ່ຮູ້ເຫັນຄວາມທຸກຂອງພວກເຈົ້າ
ຫລືຊົງກີດຂວາງສິດທິຂອງເຈົ້າໄວ້.
28 ເຈົ້າບໍ່ຮູ້ບໍ? ບໍ່ເຄີຍໄດ້ຍິນບໍ?
ວ່າພຣະຜູ້ເປັນເຈົ້າຊົງເປັນພຣະເຈົ້າຕະຫລອດໄປເປັນນິດ
ພຣະອົງຊົງສ້າງໂລກທັງໝົດ
ພຣະອົງບໍ່ເຄີຍເມື່ອຍຫລືອ່ອນແອ
ບໍ່ມີໃຜຢັ່ງຮູ້ນ້ຳພຣະໄທຂອງພຣະອົງ.
29 ພຣະອົງຊົງເຮັດໃຫ້ຜູ້ອ່ອນແຮງ ແລະອິດເມື່ອຍມີກຳລັງວັງຊາ.
30 ແມ່ນແຕ່ພວກຄົນໜຸ່ມກໍຈະອ່ອນແຮງ
ແລະຊາຍສະກັນກໍຈະລົ້ມລົງ.
31 ແຕ່ຄົນທັງຫລາຍທີ່ລໍຄອຍ ພຣະຜູ້ເປັນເຈົ້າ
ຈະໄດ້ຮັບການເສີມສ້າງເຫື່ອແຮງຂຶ້ນໃໝ່
ພວກເຂົາຈະມີປີກບິນໄປເໝືອນນົກອິນທີ
ເມື່ອພວກເຂົາແລ່ນ ຫລືຍ່າງໄປຈະບໍ່ເມື່ອຍ ແລະອ່ອນແຮງ.

# ບົດທີ 41

## ພຣະເຈົ້າຊົງຮັບປະກັນອິສຣາເອນ

1 ພຣະເຈົ້າຊົງກ່າວວ່າ,
"ປະເທດຫ່າງໄກເອີຍ ຈົ່ງມິດງຽບ ແລະຟັງເຮົາເທີ້ນ!
ໃຫ້ຕຽມຕົວສູ້ຄະດີໃນສານ
ພວກເຈົ້າຈະມີໂອກາດເວົ້າ
ໃຫ້ພວກເຮົາພ້ອມໃຈກັນຕັດສິນວ່າໃຜເປັນຜູ້ຖືກຕ້ອງ.
2 ແມ່ນໃຜນຳເອົາຜູ້ມີໄຊມາຈາກຕາເວັນອອກ
ແລະເຮັດໃຫ້ເພິ່ນມີໄຊໃນທຸກຫົນທຸກແຫ່ງ.
ແມ່ນໃຜໃຫ້ເພິ່ນມີໄຊຊະນະຕໍ່ກະສັດ ແລະຊົນຊາດທັງຫລາຍ
ດາບຂອງເພິ່ນໄດ້ຟັນພວກເຂົາລົ້ມລົງ
ພວກເຂົາເປັນເໝືອນຝຸ່ນຕໍ່ໜ້າເພິ່ນ
ໜ້າທະນູຂອງເພິ່ນໄດ້ເຮັດໃຫ້ພວກເຂົາແຕກກະຈາຍໄປ
ເໝືອນກັບລົມພັດຕໍ່ເຟືອງ.
3 ເພິ່ນໄລ່ຕິດຕາມໄປໄວຫລາຍຈົນວ່າຕີນບໍ່ຊູນດິນ
ແລະຜ່ານໄປໄດ້ຢ່າງປອດໄພ.
4 ໃຜເປັນຜູ້ເຮັດໃຫ້ການເຫລົ່ານີ້ບັງເກີດຂຶ້ນ?
ໃຜເປັນຜູ້ກຳນົດໄລຍະເວລາແຫ່ງປະຫວັດສາດ?
ເຮົາເປັນຜູ້ເລີ່ມຕົ້ນ ແລະຜູ້ປາຍ
ເຮົາພຣະຜູ້ເປັນເຈົ້ານີ້ແຫລະ ແມ່ນຜູ້ນັ້ນ.
5 ເມື່ອຊົນຊາດຫ່າງໄກເຫັນການກະທຳຂອງເຮົາແລ້ວ
ພວກເຂົາກໍຢ້ານກົວຕົວສັ່ນ
ດັ່ງນັ້ນ ພວກເຂົາທັງໝົດຈຶ່ງມາໂຮມກັນ.
6 ພວກນາຍຊ່າງໄດ້ຊ່ອຍເຫລືອ ແລະໃຫ້ກຳລັງໃຈແກ່ກັນແລະກັນ.
7 ຊ່າງໄມ້ກໍເວົ້າກັບຊ່າງຄຳວ່າ ດີແລ້ວ
ຜູ້ທີ່ເຮັດໃຫ້ຮູບກ້ຽງງາມ
ກໍໜູນໃຈຜູ້ທີ່ຕີໃຫ້ແຈບ
ບາງຄົນເວົ້າວ່າ ການຈອດນີ້ດີແລ້ວ
ພວກເຂົາໄດ້ເອົາຕະປູຕີຮູບໃຫ້ແໜ້ນ.
8 ແຕ່ເຈົ້າອິສຣາເອນຄົນໃຊ້ຂອງເຮົາເອີຍ!
ພວກເຈົ້າເປັນໄພ່ພົນທີ່ເຮົາເລືອກໄວ້
ເປັນເຊື້ອສາຍອັບຣາຮາມເພື່ອນຂອງເຮົາ.
9 ເຮົາໄດ້ເອົາພວກເຈົ້ານາຍມາຈາກສົ້ນສຸດໂລກ

ເອີ້ນມາຈາກບ່ອນໄກສຸດຂອງໂລກ
ແລະເວົ້າວ່າພວກເຈົ້າເປັນຜູ້ຮັບໃຊ້ຂອງເຮົາ
ເຮົາບໍ່ໄດ້ປະຖິ້ມ ແຕ່ໄດ້ເລືອກເອົາພວກເຈົ້າ.
10 ຢ່າສູ່ຢ້ານ ເພາະວ່າເຮົາຈະຢູ່ນຳພວກເຈົ້າ
ເຮົາເປັນພຣະເຈົ້າຂອງພວກເຈົ້າ ເຮົາຈະບໍ່ໃຫ້ພວກເຈົ້າຢ້ານຫຍັງ
ຈະຊ່ອຍເຫລືອ ແລະໜູນກຳລັງພວກເຈົ້າ
ຈະຄຸ້ມຄອງ ແລະຊ່ອຍໃຫ້ພົ້ນໄພ.
11 ໄພ່ພົນຂອງເຮົາເອີຍ! ຜູ້ໃດຄຽດຮ້າຍພວກເຈົ້າ
ຈະໄດ້ຮັບຄວາມເຊື່ອມເສຍ ແລະຮູ້ສຶກລະອາຍ
ຜູ້ໃດຕໍ່ສູ້ເຈົ້າ ຜູ້ນັ້ນຈະຕາຍ.
12 ຜູ້ໃດຮົບເສິກກັບເຈົ້າ ຜູ້ນັ້ນຈະສູນຫາຍໄປຈາກໂລກ.
13 ເຮົາເປັນພຣະຜູ້ເປັນເຈົ້າຂອງເຈົ້າ
ເຮົາຈະໜູນກຳລັງ ແລະບອກພວກເຈົ້າວ່າ
ຢ່າສູ່ຢ້ານ ເພາະເຮົາຈະຊ່ອຍເຫລືອເຈົ້າ.”
14 ພຣະຜູ້ເປັນເຈົ້າຊົງກ່າວວ່າ,
“ອິສຣາເອນເອີຍ! ເຈົ້າຍັງເປັນຜູ້ນ້ອຍ ແລະອ່ອນແອ
ແຕ່ຢ່າສູ່ຢ້ານ ເພາະເຮົາຈະຊ່ອຍເຈົ້າ
ເຮົາຄືພຣະເຈົ້າອົງບໍລິສຸດຂອງອິສຣາເອນ
ເຮົາເປັນຜູ້ຊ່ອຍໄຖ່ເອົາພວກເຈົ້າໃຫ້ພົ້ນໄພ.
15 ເຮົາຈະເຮັດໃຫ້ເຈົ້າເປັນເໝືອນເຄື່ອງໄຖຄາດ
ທີ່ຍັງໃໝ່ ແລະແຫລມຄົມ
ເຈົ້າຈະທັບ ແລະທຳລາຍພູທັງຫລາຍ
ພູນ້ອຍທັງຫລາຍຈະຖືກບົດໃຫ້ເປັນຝຸ່ນ.
16 ເຮົາຈະຈັບໂຍນພວກມັນຂຶ້ນເທິງອາກາດ
ເໝືອນເຂົ້າລີບທີ່ພັດຈາກກະດົ້ງຟັດ
ລົມ ແລະລົມພະຍຸຈະພັດມັນກະຈັດກະຈາຍໄປ
ແຕ່ເຈົ້າຈະມີຄວາມສຸກ ຍ້ອນວ່າເຮົາເປັນພຣະເຈົ້າຂອງເຈົ້າ
ແລ້ວເຈົ້າຈະກ່າວສັນລະເສີນເຮົາ
ພຣະເຈົ້າອົງບໍລິສຸດຂອງອິສຣາເອນ.
17 ເມື່ອໄພ່ພົນຜູ້ຍາກຈົນຂອງເຮົາຕ້ອງການນໍ້າ
ເມື່ອຄໍຂອງພວກເຂົາແຫ້ງຍ້ອນວ່າຫິວນໍ້າ
ເຮົາຄືພຣະຜູ້ເປັນເຈົ້າຈະຕອບຄຳອ້ອນວອນຂອງພວກເຂົາ
ເຮົາຄືພຣະເຈົ້າຂອງອິສຣາເອນຈະບໍ່ປະຖິ້ມພວກເຂົາ.

18 ເຮົາຈະເຮັດໃຫ້ແມ່ນໍ້າໄຫລຜ່ານທົ່ວພູໂລ້ນ
ແລະໃຫ້ນໍ້າພຸໄຫລອອກໃນຮ່ອມພູ
ຈະເຮັດໃຫ້ຖິ່ນແຫ້ງແລ້ງກັນດານມີໜອງນໍ້າ
ແລະໃຫ້ດິນແຫ້ງມີນໍ້າອອກບໍ່.
19 ຈະໃຫ້ຕົ້ນສົນ ຕົ້ນກະຖິນເທດ ຕົ້ນນໍ້າມັນຂຽວ
ແລະຕົ້ນໝາກກອກເທດເກີດຂຶ້ນໃນຖິ່ນແຫ້ງແລ້ງກັນດານ
ໃນບ່ອນກ້ຽງແປນຈະກາຍເປັນປ່າຕົ້ນສົນ.
20 ຄົນທັງຫລາຍຈະເຫັນ ແລະຮູ້ວ່າ
ແມ່ນເຮົາຄືພຣະຜູ້ເປັນເຈົ້າຊົງກະທຳການນີ້
ພວກເຂົາຈະເຂົ້າໃຈພ້ອມກັນວ່າ
ແມ່ນພຣະເຈົ້າອົງບໍລິສຸດຂອງອິສຣາເອນຊົງໃຫ້ບັງເກີດຂຶ້ນ.”

## ພຣະຜູ້ເປັນເຈົ້າຊົງທ້າທາຍພະທຽມ

21-22 ພຣະຜູ້ເປັນເຈົ້າຄືເຈົ້າຊີວິດຂອງອິສຣາເອນຊົງກ່າວດັ່ງນີ້,
“ພະຂອງຊົນຊາດທັງຫລາຍເອີຍ ຈົ່ງນຳຫລັກຖານ ແລະຂໍ້ໂຕ້ຖຽງ
ທີ່ດີຂອງເຈົ້າມາທີ່ນີ້
ໃຫ້ທຳນວາຍວ່າແມ່ນຫຍັງຈະເກີດຂຶ້ນ
ຈົ່ງອະທິບາຍເຫດການໃນອະດີດໃຫ້ເຮົາຮູ້
ແລະຈົ່ງບອກວ່າມັນເປັນຂຶ້ນມາໄດ້ຢ່າງໃດ
ເພື່ອເຮົາຈະໄດ້ຮູ້ເມື່ອມັນເກີດຂຶ້ນ.
23 ຈົ່ງບອກເຮົາວ່າຕໍ່ໄປນີ້ແມ່ນຫຍັງຈະເກີດຂຶ້ນ
ເພື່ອເຮົາຈະໄດ້ຮູ້ວ່າເຈົ້າເປັນພະ!
ຈົ່ງເຮັດດີ ຫລືເຮັດຮ້າຍ
ເພື່ອເຮົາຈະໄດ້ຢ້ານ ແລະຕື່ນຕົກໃຈ.
24 ການກະທຳຂອງພວກເຈົ້າກໍບໍ່ມີຫຍັງ
ແລະພວກເຈົ້າບໍ່ມີຫຍັງເລີຍ
ຄົນທັງຫລາຍທີ່ຂາບໄຫວ້ເຈົ້າກໍໜ້າກຽດຊັງ!
25 ເຮົາໄດ້ເລືອກເອົາຄົນໜຶ່ງຈາກທິດຕາເວັນອອກ
ເຂົ້າມາທາງເໜືອ
ລາວຈະຢຽບຢໍ່າພວກຜູ້ປົກຄອງເໝືອນກັບຢຽບຂີ້ຕົມ
ເໝືອນຊ່າງປັ້ນໝໍ້ຢຽບດິນໜຽວ.
26 ໃຜຈະບອກເຮົາລ່ວງໜ້າ
ຫລືທຳນວາຍວ່າສິ່ງນີ້ຈະເກີດຂຶ້ນ
ເພື່ອເຮົາຈະໄດ້ກ່າວວ່າຖືກຕ້ອງແລ້ວ

ບໍ່ມີໃຜເວົ້າເຖິງເລື່ອງນີ້
ບໍ່ມີໃຜໄດ້ຍິນເຈົ້າເວົ້າເລື່ອງນີ້ເລີຍ!
27 ເຮົາພຣະຜູ້ເປັນເຈົ້າ ເປັນຜູ້ທຳອິດທີ່ບອກຂ່າວແກ່ຊາວຊີໂອນ
ຄືເຢຣູຊາເລັມ ເພື່ອວ່າ
ປະຊາຊົນຂອງເຈົ້າຈະມາ! ພວກເຂົາຈະກັບມາບ້ານ!
28 ເມື່ອເຮົາຫລຽວເບິ່ງພະທັງຫລາຍ
ກໍບໍ່ມີຜູ້ໃດປາກເວົ້າ
ບໍ່ມີໃຜຕອບຄຳຖາມຂອງເຮົາ.
29 ພະທັງຫລາຍເຫລົ່ານີ້ບໍ່ມີປະໂຫຍດ
ມັນເຮັດຫຍັງບໍ່ໄດ້ເລີຍ
ຮູບເຄົາລົບຂອງພວກເຂົາໃຊ້ການບໍ່ໄດ້ແລະບໍ່ມີລິດເດດ.”

# ບົດທີ 42

## ຜູ້ຮັບໃຊ້ຂອງພຣະຜູ້ເປັນເຈົ້າ

1 ພຣະຜູ້ເປັນເຈົ້າຊົງກ່າວວ່າ
ນີ້ແມ່ນຜູ້ຮັບໃຊ້ຂອງເຮົາ ຜູ້ທີ່ເຮົາອູ້ມຊູ
ຜູ້ທີ່ເຮົາເລືອກເອົາໄວ້ດ້ວຍຄວາມພໍພຣະໄທ
ເຮົາໃຫ້ລາວມີອຳນາດອັນບໍລິສຸດ
ລາວຈະນຳຄວາມຍຸດຕິທຳໄປຍັງຊົນຊາດທັງຫລາຍ.
2 ລາວຈະບໍ່ຮ້ອງ ຫລືເປັ່ງສຽງອອກໄປ
ຫລືຈະບໍ່ປ່າວປະກາດຕາມຖະໜົນຫົນທາງ.
3 ຕົ້ນອໍ້ທີ່ບວມຊໍ້າແລ້ວເພິ່ນຍັງບໍ່ເຮັດໃຫ້ຂາດ
ຕະກຽງໃກ້ຈະມອດແລ້ວ ເພິ່ນຍັງບໍ່ເຮັດໃຫ້ມອດ
ຈະນຳເອົາຄວາມຍຸດຕິທຳອັນທ່ຽງແທ້ຖາວອນໄປໃຫ້ຄົນທັງປວງ.
4 ລາວຈະບໍ່ສູນເສຍຄວາມຫວັງ ຫລືຄວາມກ້າຫານ
ຈະຕັ້ງຄວາມຍຸດຕິທຳໄວ້ໃນໂລກ
ແຜ່ນດິນທີ່ຫ່າງໄກຈະລໍຄອຍຄຳສອນຂອງລາວດ້ວຍຄວາມຮ້ອນຮົນ.”
5 ພຣະເຈົ້າຊົງສ້າງທ້ອງຟ້າ ແລະກາງມັນອອກໄປ
ຊົງຕົກແຕ່ງໂລກ ແລະທຸກໆ ສິ່ງທີ່ມີຊີວິດ
ຊົງໃຫ້ຊີວິດແລະລົມຫາຍໃຈແກ່ຄົນທັງປວງ
ແລະບັດນີ້ ອົງພຣະຜູ້ເປັນເຈົ້າຊົງກ່າວຕໍ່ຜູ້ຮັບໃຊ້ຂອງພຣະອົງວ່າ,
6 “ເຮົາພຣະຜູ້ເປັນເຈົ້າໄດ້ເອີ້ນເຈົ້າມາ ແລະໃຫ້ອຳນາດແກ່ເຈົ້າ
ເພື່ອໃຫ້ຄວາມມຸ່ງໝາຍຂອງເຮົາສຳເລັດຜົນແລະຖືກຕ້ອງ

ເຮົາຈະໃຫ້ມີສຳພັນທະໄມຕີກັບຊົນຊາດທັງປວງ
ແລະເຈົ້າຈະນຳເອົາຄວາມສະຫງ່າລາສີມາຍັງປະຊາຊາດ.
7 ເຈົ້າຈະເຮັດໃຫ້ຄົນຕາບອດເຫັນຮຸ່ງ
ແລະຈະປ່ອຍຜູ້ທີ່ຢູ່ໃນຄຸກມືດເປັນອິດສະຫລະ
8 ນີ້ຄືພຣະນາມຂອງເຮົາ ແມ່ນເຮົາຜູ້ດຽວເທົ່ານັ້ນທີ່ເປັນພຣະຜູ້ເປັນເຈົ້າ
ເຮົາຈະບໍ່ແບ່ງປັນພຣະລັດສະໝີຂອງເຮົາໃຫ້ພະອື່ນ
ແລະຈະບໍ່ແບ່ງປັນຄວາມສັນລະເສີນໃຫ້ຮູບເຄົາລົບ.
9 ສິ່ງທີ່ເຮົາໄດ້ກ່າວທຳນວາຍໄວ້ໄດ້ກາຍເປັນຈິງແລ້ວ
ບັດນີ້ເຮົາຈະບອກສິ່ງໃໝ່ໆ ແກ່ເຈົ້າ
ກ່ອນທີ່ສິ່ງເຫລົ່ານັ້ນຈະໄດ້ເກີດຂຶ້ນ.”

## ເພງສັນລະເສີນ

10 ຈົ່ງຮ້ອງເພງບົດໃໝ່ຖວາຍພຣະຜູ້ເປັນເຈົ້າ
ທົ່ວໂລກຈົ່ງຮ້ອງເພງສັນລະເສີນພຣະອົງ!
ພວກເຈົ້າທີ່ແລ່ນເຮືອໃນທະເລ
ຈົ່ງສັນລະເສີນພຣະອົງ
ທຸກໆ ສິ່ງທີ່ຊົງສ້າງໄວ້ໃນທະເລ ຈົ່ງສັນລະເສີນພຣະອົງ
ແຜ່ນດິນທີ່ຢູ່ຫ່າງໄກ ແລະທຸກໆ ຄົນໃນທີ່ນັ້ນ
ຈົ່ງສັນລະເສີນພຣະອົງ.
11 ຖິ່ນແຫ້ງແລ້ງກັນດານ ແລະຫົວເມືອງທັງຫລາຍ
ຈົ່ງສັນລະເສີນພຣະອົງ
ປະຊາຊົນເກດາຈົ່ງສັນລະເສີນພຣະອົງ
ຜູ້ທີ່ຢູ່ໃນເມືອງເສລາຈົ່ງຮ້ອງໂຮມ່ວນຊື່ນຈາກເທິງຈອມພູ.
12 ຜູ້ທີ່ຢູ່ໃນປະເທດຫ່າງໄກ
ຈົ່ງຖວາຍຄຳສັນລະເສີນແລະສະຫງ່າລາສີແດ່ພຣະອົງ.
13 ພຣະຜູ້ເປັນເຈົ້າສະເດັດອອກໄປຕໍ່ສູ້ເໝືອນວິລະບູລຸດ
ພຣະອົງຊົງຕຽມພ້ອມ ແລະຮ້ອນຮົນໃນການຕໍ່ສູ້
ຊົງເປັ່ງສຽງສັ່ງຮົບ
ຊົງສະແດງລິດທານຸພາບຕໍ່ໜ້າພວກສັດຕູ.

## ພຣະເຈົ້າຊົງສັນຍາຈະຊ່ອຍໄພ່ພົນຂອງພຣະອົງ

14 ພຣະເຈົ້າຊົງກ່າວວ່າ,
“ເຮົາໄດ້ມິດງຽບຢູ່ເຫິງນານແລ້ວ
ເຮົາບໍ່ໄດ້ຕອບໄພ່ພົນຂອງເຮົາ
ແຕ່ບັດນີ້ໄດ້ມາເຖິງແລ້ວ

ເຮົາຈະຮ້ອງອອກມາເໝືອນຍິງກຳລັງອອກລູກ.
15 ເຮົາຈະທຳລາຍພູນ້ອຍພູໃຫຍ່ທັງຫລາຍ
ຈະໃຫ້ຕົ້ນໄມ້ ແລະຫຍ້າຫຽວແຫ້ງຕາຍໄປ
ຈະໃຫ້ແມ່ນໍ້າກາຍເປັນເກາະດອນ
ແລະໃຫ້ສະທັງຫລາຍແຫ້ງໄປ.
16 ເຮົາຈະຈູງຄົນຕາບອດຂອງເຮົາ
ໄປຕາມທາງທີ່ພວກເຂົາບໍ່ເຄີຍໄປ
ຈະໃຫ້ຄວາມມືດຂອງພວກເຂົາກາຍເປັນແສງສະຫວ່າງ
ແລະຈະໃຫ້ບ່ອນສູງຕໍ່າເປັນບ່ອນຮາບພຽງ
ສິ່ງເຫລົ່ານີ້ເຮົາຈະຕ້ອງກະທຳ.
17 ຄົນທັງຫລາຍທີ່ເຊື່ອຖືໃນຮູບເຄົາລົບ
ຜູ້ທີ່ຖືຮູບພະນັ້ນເປັນພະຂອງຕົນນັ້ນ
ຈະອັບອາຍຂາຍໜ້າ ແລະເສຍສັກສີ.”

## ອິສຣາເອນບໍ່ຍອມຮັບບົດຮຽນ

18 ພຣະຜູ້ເປັນເຈົ້າ ຊົງກ່າວວ່າ,
“ຄົນຫູໜວກເອີຍ ຈົ່ງຟັງເດີ!
ພວກເຈົ້າຜູ້ຕາບອດເອີຍ ຈົ່ງຟັງຄັກໆ!
19 ໃຜເປັນຄົນຕາບອດກວ່າຜູ້ຮັບໃຊ້ຂອງເຮົາ?
ແລະໃຜຫູໜວກໜັກກວ່າຄົນສົ່ງຂ່າວທີ່ເຮົາໃຊ້ໄປ?
20 ອິສຣາເອນ ເອີຍ! ເຈົ້າໄດ້ເຫັນຫລາຍຢ່າງ ແຕ່ບໍ່ຮູ້ທີ່ບຫຍັງເລີຍ
ເຈົ້າມີຫູສຳລັບຟັງ ແຕ່ເຈົ້າໄດ້ຍິນຫຍັງແດ່?
21 ພຣະຜູ້ເປັນເຈົ້າ ຊົງມີພຣະປະສົງຢ່າງແຮງກ້າຢາກຊ່ອຍພວກເຂົາໃຫ້ພົ້ນໄພ
ຈຶ່ງໄດ້ແຕ່ງຕັ້ງຄຳສັ່ງສອນຂອງພຣະອົງຢ່າງມີກຽດ.
22 ແຕ່ໄພ່ພົນຂອງພຣະອົງໄດ້ຖືກເຂົາປຸ້ນ
ຖືກເຂົາຈັບຂັງໄວ້ໃນຫ້ອງມືດ
ແລະເອົາເຊື່ອງໄວ້ໃນຄຸກ
ພວກເຂົາຖືກລັກ ແລະປຸ້ນເອົາໄປ
ໂດຍບໍ່ມີໃຜມາຊ່ອຍເຫລືອເລີຍ.
23 ມີໃຜໃນພວກເຈົ້າຈະຟັງເລື່ອງນີ້ແດ່?
ຕໍ່ແຕ່ນີ້ໄປພວກເຈົ້າຈະຕັ້ງໃຈຟັງບໍ?
24 ໃຜມອບ ອິສຣາເອນ ໃຫ້ແກ່ພວກປຸ້ນ?
ແມ່ນ ພຣະຜູ້ເປັນເຈົ້າ ເອງເປັນຜູ້ມອບ ຍ້ອນເຮົາ
ເຮັດບາບຕໍ່ສູ້ພຣະອົງ!

ພວກເຮົາບໍ່ໄດ້ດຳເນີນຊີວິດຕາມປະສົງຂອງພຣະອົງ
ຫລືບໍ່ເຊື່ອຟັງຄຳສັ່ງສອນທີ່ພຣະອົງຊົງບອກ.
25 ສະນັ້ນ ພຣະອົງຈຶ່ງຊົງພຣະພິໂລດພວກເຮົາ
ແລະຊົງໃຫ້ປະສົບກັບໄພສົງຄາມຢ່າງຮ້າຍແຮງ
ຄວາມໂກດຮ້າຍຂອງພຣະອົງຮ້ອນໄປທົ່ວທັງ ອິສຣາເອນ ເໝືອນດັ່ງໄຟເຜົາ
ແຕ່ພວກເຮົາບໍ່ໄດ້ຮູ້ວ່າມີຫຍັງເກີດຂຶ້ນ
ແລະບໍ່ສົນໃຈໃນເລື່ອງນີ້ເລີຍ.

# ບົດທີ 43

## ພຣະເຈົ້າຊົງຊ່ອຍໄພ່ພົນຂອງພຣະອົງ

1 ອິສຣາເອນ ເອີຍພຣະຜູ້ເປັນເຈົ້າ ອົງຊົງສ້າງເຈົ້າໄດ້ກ່າວວ່າ,
“ຢ່າສູ່ຢ້ານ ເຮົາຈະຄຸ້ມຄອງເຈົ້າ
ເຮົາໄດ້ເອີ້ນເຈົ້າຕາມຊື່ ເຮົາໄດ້ໄຖ່ພວກເຈົ້າມາເປັນຄົນຂອງເຮົາ.
2 ເມື່ອເຈົ້າຜ່ານໄຟ ຫລືລອຍນໍ້າເລິກ ເຮົາກໍຈະຢູ່ນຳເຈົ້າ
ເຈົ້າຈຶ່ງຈະຜ່ານພົ້ນຄວາມຍາກລຳບາກໄປໄດ້
ເມື່ອເຈົ້າຍ່າງຜ່ານໄຟໄປ ມັນຈະບໍ່ໄໝ້ເຈົ້າ
ເຈົ້າຈະຜ່ານຜ່າຄວາມຫຍຸ້ງຍາກເຫລົ່ານີ້ໄປໄດ້.
3 ເພາະວ່າເຮົາເປັນ ພຣະຜູ້ເປັນເຈົ້າ ຂອງເຈົ້າ
ຄື ພຣະເຈົ້າ ອົງບໍລິສຸດຂອງ ອິສຣາເອນ ອົງຊົງຊ່ອຍເຈົ້າໃຫ້ລອດພົ້ນ
ເຮົາຈະໃຫ້ ເອຢິບ ເປັນຄ່າໄຖ່ຂອງເຈົ້າ
ຈະໃຫ້ ເອທີໂອເປຍ ແລະ ເສບາ ເປັນຄ່າແລກປ່ຽນເອົາເຈົ້າ.
4 ແລະເອົາຊົນຊາດທັງປວງແລກກັບຊີວິດຂອງເຈົ້າ
ເພາະວ່າເຈົ້າມີຄຸນຄ່າສຳລັບເຮົາ
ເຮົາເປັນຜູ້ໃຫ້ກຽດແລະຮັກເຈົ້າ.
5 ຢ່າສູ່ຢ້ານ ເພາະວ່າເຮົາຈະຢູ່ນຳເຈົ້າ!
ເຮົາຈະໂຮມເອົາຍາດຕິພີ່ນ້ອງພັນຂອງເຈົ້າມາຈາກ
ທິດຕາເວັນອອກແລະທິດຕາເວັນຕົກ.
6 ເຮົາຈະບອກໃຫ້ທິດເໜືອປ່ອຍພວກເຂົາໄປ
ແລະບອກບໍ່ໃຫ້ທິດໃຕ້ຖ່ວງດຶງເຂົາໄວ້
ຈົ່ງປ່ອຍໃຫ້ໄພ່ພົນຂອງເຮົາມາແຕ່ທີ່ໄກເສຍ
ຄືມາຈາກທຸກພາກສ່ວນຂອງໂລກ.
7 ພວກເຂົາເປັນຄົນພິເສດຂອງເຮົາເອງ
ເຮົາໄດ້ສ້າງພວກເຂົາເພື່ອນຳກຽດມາສູ່ເຮົາ.”

## ອິສຣາເອນເປັນພະຍານຂອງພຣະຜູ້ເປັນເຈົ້າ

8 ພຣະເຈົ້າຊົງກ່າວວ່າ,
"ຈົ່ງເອີ້ນເອົາ ໄພ່ພົນຂອງເຮົາມາຍັງສານ
ພວກເຂົາມີຕາ ແຕ່ບໍ່ເຫັນຮຸ່ງ
ມີຫູ ແຕ່ບໍ່ໄດ້ຍິນ.
9 ຈົ່ງເອີ້ນເອົາຊົນຊາດທັງຫລາຍມາພິສູດເບິ່ງ
ວ່າພະໃດຂອງພວກເຂົາໄດ້ບອກເຫດການລ່ວງໜ້າ
ແລະໄດ້ທຳນວາຍໃນສິ່ງທີ່ກຳລັງຈະເກີດຂຶ້ນດຽວນີ້
ໃຫ້ພະເຫລົ່ານີ້ນຳເອົາພະຍານມາເບິ່ງ
ເພື່ອຢັ້ງຢືນວ່າຕົນຖືກຕ້ອງ
ແລະຄຳເວົ້າຂອງຕົນເປັນຈິງຫລືບໍ່?
10 ຊາວອິສຣາເອນເອີຍ! ເຈົ້າເປັນພະຍານຂອງເຮົາ
ເຮົາເລືອກເອົາເຈົ້າເປັນຊົນຊາດຮັບໃຊ້ເຮົາ
ເພື່ອເຈົ້າຈະເຊື່ອໃນຕົວເຮົາ ແລະຮູ້ຈັກວ່າ
ເຮົາເທົ່ານັ້ນທີ່ເປັນພຣະເຈົ້າ
ນອກຈາກເຮົາແລ້ວບໍ່ມີພຣະເຈົ້າອົງອື່ນອີກ
ກ່ອນ ແລະຫລັງເຮົາບໍ່ເຄີຍມີພຣະເຈົ້າຈັກເທື່ອ.
11 ເຮົາຜູ້ດຽວເປັນພຣະຜູ້ເປັນເຈົ້າ
ຜູ້ດຽວເທົ່ານັ້ນທີ່ຊ່ອຍເຈົ້າໃຫ້ພົ້ນໄພໄດ້.
12 ເຮົາໄດ້ບອກໄວ້ກ່ອນແລ້ວວ່າສິ່ງນີ້ຈະເກີດຂຶ້ນ
ແລະເຮົາກໍຈະຊ່ອຍເຈົ້າ
ພະຕ່າງປະເທດເຮັດດັ່ງນີ້ບໍ່ໄດ້
ພວກເຈົ້າເປັນພະຍານຂອງເຮົາ.
13 ເຮົາເປັນພຣະເຈົ້າແລະຈະເປັນຢູ່ຢ່າງນີ້ຕະຫລອດໄປ
ບໍ່ມີໃຜໜີພົ້ນອຳນາດຂອງເຮົາໄປໄດ້
ແລະທັງປ່ຽນແປງການກະທຳຂອງເຮົາບໍ່ໄດ້."

## ການພິຈາລະນາຄອນບາບີໂລນ

14 ພຣະຜູ້ເປັນເຈົ້າອົງບໍລິສຸດຂອງອິສຣາເອນ
ຜູ້ຊົງໄຖ່ເຈົ້າໃຫ້ພົ້ນໄພຊົງກ່າວວ່າ,
"ເພື່ອຊ່ອຍເຈົ້າ ເຮົາຈະສົ່ງກອງທັບໄປໂຈມຕີບາບີໂລນ
ຈະທຳລາຍປະຕູເມືອງ ແລະສຽງໂຮຮ້ອງຂອງປະຊາຊົນ
ຈະກາຍເປັນສຽງຮ້ອງໄຫ້ໂອຍຄາງ.
15 ເຮົາເປັນພຣະຜູ້ປັນເຈົ້າອົງບໍລິສຸດຂອງເຈົ້າ

ອິສຣາເອນ ເອີຍ ເຮົາໄດ້ສ້າງເຈົ້າ ແລະເຮົາເປັນເຈົ້າຊີວິດຂອງເຈົ້າ.”
16 ຕັ້ງແຕ່ເຫິງນານມາແລ້ວພຣະຜູ້ເປັນເຈົ້າໄດ້ຊົງສ້າງທາງໃນທະເລ
ຄືສ້າງທາງໃນຄື້ນນໍ້າສູງ.
17 ພຣະອົງຊົງນໍາກອງທັບອັນເຂັ້ມແຂງ
ມີລົດຮົບ ແລະມ້າໄປທໍາລາຍພວກເຂົາ
ພວກເຂົາຈຶ່ງລົ້ມລົງແລະລຸກຂຶ້ນບໍ່ໄດ້
ເປັນເໝືອນໄຟທຽນທີ່ມອດແລ້ວ!
18 ແຕ່ພຣະຜູ້ເປັນເຈົ້າຊົງກ່າວວ່າ
ຢ່າຈົດຈໍາເລື່ອງທີ່ລ່ວງມາແລ້ວ
ຫລືວິພາກວິຈານໃນສິ່ງທີ່ເກີດຂຶ້ນແລ້ວ.
19 ຈົ່ງເຝົ້າເບິ່ງສິ່ງໃໝ່ໆ ທີ່ເຮົາຈະກະທໍານີ້
ມັນກໍາລັງຈະເກີດຂຶ້ນແລ້ວ ເຈົ້າຈະເຫັນດຽວນີ້ລະ!
ເຮົາຈະສ້າງທາງຜ່ານຖິ່ນແຫ້ງແລ້ງກັນດານ
ແລະຈະໃຫ້ມີແມ່ນໍ້າຢູ່ໃນທີ່ນັ້ນ.
20 ແມ່ນແຕ່ສັດປ່າກໍຈະໃຫ້ກຽດເຮົາ
ພວກໝາປ່າແລະນົກກະຈອກເທດກໍຈະສັນລະເສີນເຮົາ
ເພາະວ່າເຮົາໄດ້ໃຫ້ນໍ້າໄຫລຜ່ານຖິ່ນແຫ້ງແລ້ງກັນດານ
ເພື່ອໃຫ້ນໍ້າແກ່ໄພ່ພົນທີ່ເຮົາໄດ້ເລືອກໄວ້.
21 ພວກເຂົາເປັນໄພ່ພົນທີ່ເຮົາສ້າງເພື່ອເຮົາເອງ
ພວກເຂົາຈະຮ້ອງເພງສັນລະເສີນເຮົາ!”

## ບາບຂອງອິສຣາເອນ

22 ພຣະຜູ້ເປັນເຈົ້າຊົງກ່າວວ່າ,
“ອິສຣາເອນ ເອີຍ ເຈົ້າບໍ່ໄດ້ຂາບໄຫວ້ເຮົາ
ເຈົ້າບໍ່ໄດ້ເມື່ອຍຍ້ອນເຮົາ.
23 ເຈົ້າບໍ່ໄດ້ນໍາເອົາແບ້ມາເຜົາບູຊາເຮົາ
ບໍ່ໄດ້ເຜົາບູຊາເພື່ອເປັນກຽດແກ່ເຮົາ
ເຮົາບໍ່ໄດ້ໃຫ້ເຈົ້າບົວລະບັດເຮົາດ້ວຍເຄື່ອງຖວາຍບູຊາ
ຫລືໃຫ້ເຈົ້າອິດເມື່ອຍດ້ວຍເຄື່ອງຫອມບູຊາ.
24 ພວກເຈົ້າບໍ່ໄດ້ຊື້ເຄື່ອງຫອມສໍາລັບເຮົາ
ຫລືບໍ່ໄດ້ເຮັດໃຫ້ເຮົາພໍໃຈດ້ວຍໄຂມັນສັດ
ແຕ່ໄດ້ໃຫ້ເຮົາຮັບພາລະດ້ວຍເລື່ອງບາບຂອງເຈົ້າ
ເຮົາອິດເມື່ອຍຍ້ອນຄວາມຜິດຂອງເຈົ້າ.
25 ເຮົາເປັນພຣະເຈົ້າຜູ້ລຶບລ້າງບາບຂອງເຈົ້າ

ເຮົາເຮັດດັ່ງນີ້ຍ້ອນເຫັນແກ່ເຮົາເອງ
ເຮົາຈະບໍ່ຈົດຈຳບາບຂອງພວກເຈົ້າໄວ້.
26 ພວກເຮົາພາກັນໄປຍັງສານຕັດສິນເທາະ
ເພື່ອພິສູດເບິ່ງວ່າເຈົ້າ ຖືກຫລືຜິດ.
27 ບັນພະບູລຸດແຕ່ເກົ່າກ່ອນຂອງເຈົ້າໄດ້ເຮັດບາບ
ພວກຜູ້ນຳກໍໄດ້ເຮັດບາບຕໍ່ສູ້ເຮົາ.
28 ພວກຜູ້ປົກຄອງກໍໝິ່ນປະໝາດສະຖານທີ່ສັກສິດຂອງເຮົາ
ດັ່ງນັ້ນ ເຮົາຈຶ່ງທຳລາຍອິສຣາເອນ
ແລະປ່ອຍໃຫ້ພວກເຂົາໝິ່ນປະໝາດໄພ່ພົນຂອງເຮົາເອງ.”

# ບົດທີ 44

## ພຣະຜູ້ເປັນເຈົ້າຊົງເປັນພຣະເຈົ້າແຕ່ອົງດຽວ

1 ພຣະຜູ້ເປັນເຈົ້າຊົງກ່າວວ່າ,
“ບັດນີ້ອິສຣາເອນຜູ້ຮັບໃຊ້ຂອງເຮົາ
ແລະເຊື້ອສາຍຢາໂຄບໄພ່ພົນທີ່ເຮົາເລືອກໄວ້ ຈົ່ງຟັງເດີ້.
2 ເຮົາເປັນພຣະຜູ້ເປັນເຈົ້າອົງຊົງສ້າງເຈົ້າ
ເຮົາຊ່ອຍເຫລືອເຈົ້າຕັ້ງແຕ່ຢູ່ໃນທ້ອງ
ຢ່າສູ່ຢ້ານ ເພາະວາເຈົ້າເປັນຜູ້ຮັບໃຊ້ຂອງເຮົາ
ເປັນໄພ່ພົນທີ່ເຮົາໄດ້ມອບຄວາມສັດຊື່ ແລະເລືອກເອົາໄວ້.
3 ເຮົາຈະເທນ້ຳລົງເທິງແຜ່ນດິນທີ່ແຫ້ງແລ້ງ
ແລະເຮັດໃຫ້ນ້ຳໄຫລໄປໃນຖິ່ນແຫ້ງແລ້ງກັນດານ
ຈະເທອຳນາດອັນບໍລິສຸດຂອງເຮົາລົງເທິງລູກຫລານເຈົ້າ
ແລະອວຍໄຊໃຫ້ພອນເຊື້ອສາຍຂອງເຈົ້າ.
4 ພວກເຂົາຈະງອກງາມຂຶ້ນເໝືອນຫຍ້າແຄມນ້ຳ
ເໝືອນຕົ້ນໄມ້ໃກ້ສາຍນ້ຳໄຫລລິນ.
5 ຄົນຜູ້ໜຶ່ງອາດຈະເວົ້າວ່າ ຂ້ອຍເປັນຂອງພຣະຜູ້ເປັນເຈົ້າ
ພວກເຂົາຈະຮ່ວມວົງສາຄະນາຍາດກັບອິສຣາເອນ
ອີກຜູ້ໜຶ່ງ ຈະຂຽນພຣະນາມຂອງພຣະຜູ້ເປັນເຈົ້າໃສ່ແຂນຂອງຕົນ
ແລະເອີ້ນຕົວເອງວ່າເປັນໄພ່ພົນຂອງພຣະເຈົ້າ.”
6 ພຣະຜູ້ເປັນເຈົ້າອົງມີອຳນາດອັນຍິ່ງໃຫຍ່
ອົງຊົງໄຖ່ແລະຄຸ້ມຄອງອິສຣາເອນກ່າວດັ່ງນີ້:
“ເຮົາເປັນຜູ້ຕົ້ນ ເປັນຜູ້ປາຍ ເປັນພຣະເຈົ້າແຕ່ຜູ້ດຽວ
ບໍ່ມີພຣະເຈົ້າອົງອື່ນນອກຈາກເຮົາ.

7 ມີໃຜແດ່ເຮັດໄດ້ຄືເຮົາ?
ແລະບອກເຫດການຕັ້ງແຕ່ເລີ່ມຕົ້ນທີ່ເຮົາໄດ້ສ້າງໂລກ
ຈົນເຖິງເວລາສຸດທ້າຍໄດ້ຢ່າງຖືກຕ້ອງ?
8 ໄພ່ພົນຂອງເຮົາເອີຍ ຢ່າສູ່ຢ້ານເດີ້
ເຮົາໄດ້ບອກເລື່ອງທີ່ຈະເກີດຂຶ້ນແກ່ເຈົ້າ
ຕັ້ງແຕ່ເຫິງນານມາແລ້ວແມ່ນບໍ?
ພວກເຈົ້າເປັນພະຍານຂອງເຮົາ
ມີພຣະເຈົ້າອົງອື່ນນອກຈາກເຮົາບໍ?
ພຣະເຈົ້າອົງມີອຳນາດອັນຍິ່ງໃຫຍ່ທີ່ເຮົາບໍ່ຮູ້ມີບໍ?"

## ການໄຫວ້ຮູບເຄົາລົບ

9ຄົນທັງປວງທີ່ເຮັດຮູບເຄົາລົບ ກໍບໍ່ມີຄຸນຄ່າຫຍັງ ພວກເຂົາພາກພູມໃຈໃນຮູບທີ່ບໍ່ມີປະ-
ໂຫຍດໃນທີ່ສຸດ ຜູ້ທີ່ໄຫວ້ຮູບເຄົາລົບກໍເປັນຄືຄົນຫູໜວກຕາບອດ ແລະຈະໄດ້ຮັບຄວາມອັບອາຍ
ຂາຍໜ້າ. 10ການຫຼໍ່ຮູບພະສຳລັບຂາບໄຫວ້ນີ້ກໍບໍ່ເປັນປະໂຫຍດຫຍັງ. 11ທຸກໆ ຄົນທີ່ຂາບໄຫວ້
ຮູບຈະເສຍປຽບ ພວກຜູ້ເຮັດຮູບເຄົາລົບກໍເປັນພຽງມະນຸດ ຊຶ່ງບໍ່ມີຫຍັງດີວິເສດໃຫ້ເອົາພວກເຂົາ
ມາໂຮມກັນເບິ່ງດູ ແລ້ວພວກເຂົາຈະຢ້ານສັ່ນ ແລະອັບອາຍຂາຍໜ້າ.

12ຊ່າງເຫລັກກໍຈັບບາຍເຫລັກ ແລະຕີເຫລັກນັ້ນຢູ່ໃນເຕົາໄຟ ແຂນອັນແຂງແຮງຂອງລາວ
ໄດ້ຕີເຫລັກເປັນຮູບຮ່າງຕາມຄວາມຕ້ອງການ ລາວຫິວເຂົ້າຫິວນໍ້າ ແລະອິດເມື່ອຍຫລາຍ.
13ຊ່າງໄມ້ກໍຂີດແທກໄມ້ ແລະເຊາະກົບໃຫ້ກ້ຽງດີ ລາວເອົາໄມ້ນັ້ນເຮັດເປັນຮູບຄົນທີ່ມີຮູບຮ່າງ
ງາມ ແລ້ວເອົາໄປຕັ້ງໄວ້ໃນວິຫານ. 14ລາວເລືອກເອົາໄມ້ສົນໄມ້ກໍ່ຈາກປ່າມາໃຊ້ ພ້ອມທັງປູກ
ຕົ້ນແປກໄວ້ຖ້າຟ້າຝົນຕົກລົງມາຫົດມັນໃຫ້ໃຫຍ່ຂຶ້ນ. 15ມະນຸດໃຊ້ຕົ້ນໄມ້ນັ້ນເຮັດຟືນແດ່ ເຮັດຮູບ
ເຄົາລົບແດ່ ເອົາດັງໄຟຜີງ ແລະອົບເຂົ້າໜົມແດ່ ອີກສ່ວນໜຶ່ງເອົາໄວ້ເຮັດຮູບພະສຳລັບຂາບ
ໄຫວ້. 16ເຄິ່ງໜຶ່ງຂອງໄມ້ແຕ່ລະລຳ ລາວເອົາໄປດັງໄຟ ແລະປີ້ງຊີ້ນກິນຢ່າງອີ່ມໜຳສຳລານ
ເວລາຜີງໄຟອົບອຸ່ນນັ້ນລາວເວົ້າວ່າ, "ໄຟນີ້ດັກຫລາຍ ອຸ່ນຫລາຍທີ່ສຸດ!" 17ໄມ້ທີ່ເຫລືອລາວເອົາ
ເຮັດຮູບເຄົາລົບ ແລ້ວກໍຂາບໄຫວ້ ແລະອ້ອນວອນວ່າ, "ພະອົງຊົງເປັນພະຂອງຂ້ານ້ອຍ ໂຜດ
ຊ່ອຍຮັກສາຂ້ານ້ອຍແດ່ທ້ອນ."

18ຄົນໂງ່ຈ້າເຊັ່ນນີ້ ພວກເຂົາບໍ່ຮູ້ວ່າຕົນກຳລັງເຮັດຫຍັງ ເພາະຕາກໍຖືກປິດ ແລະບໍ່ຮູ້ຄວາມ
ຈິງ. 19ຜູ້ເຮັດຮູບເຄົາລົບກໍບໍ່ມີປັນຍາພໍທີ່ຈະສຳນຶກວ່າ, "ຂ້ອຍໄດ້ເອົາໄມ້ສ່ວນໜຶ່ງດັງໄຟເພື່ອອົບ
ເຂົ້າໜົມ ແລະປີ້ງຊີ້ນກິນ ທີ່ເຫລືອນັ້ນຂ້ອຍເອົາເຮັດຮູບເຄົາລົບ ແລ້ວຂ້ອຍກໍກົ້ມລົງຂາບໄຫວ້
ທ່ອນໄມ້ນັ້ນ." 20ຄວາມຈິງແລ້ວແມ່ນລາວກິນຂີ້ເທົ່າ! ຄວາມຄິດແບບໂງ່ໆ ໄດ້ນຳລາວໃຫ້ຫລົງ
ຜິດ ແລະລາວບໍ່ຮູ້ເມື່ອວ່າຮູບເຄົາລົບໃນມືນັ້ນບໍ່ແມ່ນສິ່ງວິເສດເລີຍ ແມ່ນແຕ່ຂອງຫລອກລວງ.

## ພຣະຜູ້ເປັນເຈົ້າຄືພຣະຜູ້ສ້າງ ແລະຊ່ອຍເຫລືອໃຫ້ພົ້ນ

21 ພຣະຜູ້ເປັນເຈົ້າຊົງກ່າວວ່າ,
ອິສຣາເອນເອີຍ ຈົ່ງຈົດຈຳສິ່ງເຫລົ່ານີ້

ຈົ່ງລະນຶກວ່າເຈົ້າເປັນຜູ້ຮັບໃຊ້ຂອງເຮົາ ເຮົາໄດ້ເປັນຜູ້ສ້າງເຈົ້າ
ແລະເຮົາກໍຈະບໍ່ລືມເຈົ້າຈັກເທື່ອ.
22 ເຮົາໄດ້ລຶບລ້າງບາບຂອງເຈົ້າຖິ້ມເໝືອນກັບກວາດເມກໜີ
ຈົ່ງກັບມາຫາເຮົາ ເພາະວ່າເຮົາເປັນ ພຣະຜູ້ຊ່ອຍ ໄຖ່ໃຫ້ເຈົ້າພົ້ນ.”
23 ໂອ ຟ້າສະຫວັນເອີຍ!
ໃຕ້ພື້ນພິພົບເອີຍ!
ພູເຂົາແລະຕົ້ນໄມ້ທັງຫລາຍເອີຍ ຈົ່ງຮ້ອງໂຮດ້ວຍຄວາມຍິນດີເທີ້ນ
ພຣະຜູ້ເປັນເຈົ້າຊົງຊ່ອຍໄຖ່ໃຫ້ອິສຣາເອນ ໄພ່ພົນຂອງພຣະອົງໃຫ້ພົ້ນໄພ
ແລະຊົງສະແດງໃຫ້ເຫັນຄວາມຍິ່ງໃຫຍ່ຂອງພຣະອົງໃນ ອິສຣາເອນ.
24 ເຮົາເປັນ ພຣະຜູ້ເປັນເຈົ້າ ເປັນພຣະຜູ້ສ້າງ
ແລະຜູ້ຊ່ອຍໄຖ່ໃຫ້ລອດພົ້ນຂອງເຈົ້າ
ເຮົາເປັນ ພຣະຜູ້ເປັນເຈົ້າ ຄືພຣະຜູ້ສ້າງສັບພະສິ່ງທັງປວງ
ເຮົາຜູ້ດຽວທີ່ກາງທ້ອງຟ້າອອກ
ເມື່ອເຮົາສ້າງໂລກ ບໍ່ມີໃຜຊ່ອຍເຮົາເລີຍ!
25 ເຮົາໄດ້ເຮັດໃຫ້ພວກໝໍມໍເສຍຄວາມສັກສິດ
ແລະລຶບລ້າງຄຳທຳນວາຍຂອງໝໍໂຫນ
ເຮົາບໍ່ຍອມຟັງຖ້ອຍຄຳຂອງພວກນັກປາດ
ແລະຊີ້ໃຫ້ເຫັນວ່າເຂົາບໍ່ມີປັນຍາເລີຍ.
26 ແຕ່ເມື່ອໃດຄົນໃຊ້ຂອງເຮົາກ່າວທຳນວຍ
ເມື່ອໃດເຮົາໃຊ້ຜູ້ສົ່ງຂ່າວໄປເຜີຍແຜ່ແຜນການຂອງເຮົາ
ເຮົາກໍເຮັດໃຫ້ແຜນການເຫລົ່ານັ້ນກັບຄຳທຳນວຍເກີດເປັນຈິງ
ເຮົາບອກ ເຢຣູຊາເລັມ ວ່າປະຊາຊົນຈະໄດ້ຢູ່ທີ່ນັ້ນອີກ
ແລະບອກຫົວເມືອງ ຢູດາ ວ່າພວກມັນຈະຖືກສ້າງຂຶ້ນໃໝ່ອີກ
ຫົວເມືອງທີ່ຫັກພັງເຫລົ່ານີ້ຈະຖືກຍົກຍໍຂຶ້ນອີກ.
27 ເຮົາຈະສັ່ງບັນຊາໃຫ້ນໍ້າມະຫາສະໝຸດແຫ້ງ.
28 ເຮົາບອກກະສັດ ໄຊຣັດ ວ່າ ເຈົ້າເປັນຜູ້ໜຶ່ງທີ່ເຮົາຈະໃຫ້ປົກຄອງ
ເຈົ້າຈະເຮັດແຕ່ສິ່ງທີ່ເຮົາຢາກໃຫ້ເຮັດ
ເຈົ້າຈະສັ່ງໃຫ້ພວກເຂົາສ້າງ ເຢຣູຊາເລັມ ຂຶ້ນໃໝ່
ແລະສັ່ງໃຫ້ວາງຮາກຖານພຣະວິຫານຂຶ້ນໃໝ່.”

# ບົດທີ 45

## ພຣະຜູ້ເປັນເຈົ້າຊົງແຕ່ງຕັ້ງກະສັດໄຊຣັດ

1 ໄຊຣັດ ເປັນກະສັດທີ່ ພຣະຜູ້ເປັນເຈົ້າ ໄດ້ເອົານໍ້າມັນທິດສົງ

ໃຫ້ເປັນກະສັດພິເສດຂອງພຣະອົງ
ພຣະອົງແຕ່ງຕັ້ງ ໄຊຣັດ ເພື່ອຕີຊະນະປະຊາຊົນທັງຫລາຍ
ເພື່ອປົດອຳນາດຂອງກະສັດທັງຫລາຍ
ພຣະຜູ້ເປັນເຈົ້າ ຈະຊົງໄຂປະຕູເມືອງຕ້ອນຮັບ ໄຊຣັດ
ພຣະຜູ້ເປັນເຈົ້າ ຊົງກ່າວຕໍ່ ໄຊຣັດ ວ່າ,
2 "ເຮົາເອງຈະຈັດຕຽມຫົນທາງ
ແລະພູນ້ອຍໃຫຍ່ໃຫ້ຮາບພຽງລຽບງາມ
ຈະທຸບຕີປະຕູທອງສຳລິດໃຫ້ແຕກຫັກ
ແລະຕັດໄລປະຕູເຫລັກອອກ.
3 ເຮົາຈະມອບຊັບສົມບັດຈາກບ່ອນມືດ ແລະບ່ອນລັບລີ້ໃຫ້ເຈົ້າ
ແລ້ວເຈົ້າຈະຮູ້ວ່າເຮົາແມ່ນ ພຣະຜູ້ເປັນເຈົ້າ
ແລະ ພຣະເຈົ້າ ຂອງ ອິສຣາເອນ ຊົງເລືອກເອົາເຈົ້າ.
4 ເຮົາໄດ້ແຕ່ງຕັ້ງເຈົ້າ ກໍຍ້ອນເຮົາເຫັນແກ່ຄົນໃຊ້ຂອງເຮົາ
ຄືປະຊາຊົນ ອິສຣາເອນ ທີ່ເຮົາໄດ້ເລືອກໄວ້
ເຖິງແມ່ນເຈົ້າບໍ່ຮູ້ຈັກເຮົາ
ເຮົາກໍໃຫ້ກຽດຢ່າງໃຫຍ່ຫລວງແກ່ເຈົ້າ.
5 ເຮົາເປັນ ພຣະຜູ້ເປັນເຈົ້າ ບໍ່ມີພຣະເຈົ້າ ອົງອື່ນອີກ
ເຖິງແມ່ນເຈົ້າບໍ່ຮູ້ຈັກເຮົາ
ເຮົາກໍຈະໃຫ້ອຳນາດແກ່ເຈົ້າ.
6 ເຮົາໄດ້ກະທຳການນີ້ເພື່ອທຸກໆ ຄົນ
ຂໍໃຫ້ທົ່ວໂລກຮູ້ວ່າເຮົາເປັນ ພຣະຜູ້ເປັນເຈົ້າ
ແລະຮູ້ວ່າບໍ່ມີ ພຣະເຈົ້າ ອົງອື່ນອີກນອກຈາກເຮົາ.
7 ເຮົາໄດ້ສ້າງຕັ້ງທັງຄວາມສະຫວ່າງ ແລະຄວາມມືດ
ເຮົາໃຫ້ໂຊກ ແລະໄພພິບັດ
ເຮົາຄື ພຣະຜູ້ເປັນເຈົ້າ ໄດ້ກະທຳການນີ້ທັງໝົດ.
8 ເຮົາຈະສົ່ງອິດສະຫລະພາບກັບຄວາມຍຸດຕິທຳ
ລົງມາຈາກຟ້າເໝືອນຫ່າຝົນ
ແຜ່ນດິນໂລກຈະໄດ້ອ້າຮັບເອົາ
ອິດສະຫລະພາບກັບຄວາມຍຸດຕິທຳນັ້ນຈຶ່ງຈະຈະເລີນເຕີບໂຕ
ເຮົາຄື ພຣະຜູ້ເປັນເຈົ້າ ຈະເຮັດໃຫ້ສິ່ງນີ້ເກີດຂຶ້ນ."

## ພຣະຜູ້ສ້າງ ແລະເລື່ອງເກົ່າແກ່

9 ໝໍ້ດິນ ຫລືໝໍ້ອື່ນໆ ຢ່າງດຽວກັນນີ້
ຈະກ້າຖົກຖຽງຜູ້ປັ້ນມັນບໍ?

ດິນໜຽວຈະຖາມຊ່າງປັ້ນໝໍ້ບໍວ່າ, “ເຈົ້າກຳລັງເຮັດຫຍັງ?”
ໝໍ້ດິນຈະເວົ້າເຖິງຄວາມຊຳນິຊຳນານຂອງຜູ້ປັ້ນມັນບໍ?
10 ມີໃຜແດ່ກ້າເວົ້າກັບພໍ່ແມ່ຕົນວ່າ,
“ເປັນຫຍັງເຈົ້າຈຶ່ງຫລໍ່ຫລອມໃຫ້ຂ້ອຍຄືຜູ້ນີ້?
11 ພຣະຜູ້ເປັນເຈົ້າ ພຣະເຈົ້າອົງບໍລິສຸດຂອງ ອິສຣາເອນ
ຜູ້ຊົງປັ້ນສ້າງພວກເຂົາ ຊົງກ່າວວ່າ,
“ເຈົ້າບໍ່ມີສິດຖາມກ່ຽວກັບລູກຂອງເຮົາດອກ
ຫລືບໍ່ມີສິດບອກໃຫ້ເຮົາເຮັດຫຍັງໃຫ້ດອກ.
12 ເຮົາເປັນຜູ້ສ້າງໂລກ
ແລະສ້າງມະນຸດໃຫ້ອາໄສຢູ່ທີ່ນັ້ນ
ເຮົາກາງທ້ອງຟ້າອອກດ້ວຍລິດເດດຂອງເຮົາ
ເຮົາບັງຄັບບັນຊາຕາເວັນ ແລະເດືອນດາວ.
13 ເຮົາເອງໄດ້ຊຸກຊວນໃຫ້ກະສັດ ໄຊຣັດ ເຮັດດີ
ເພື່ອໃຫ້ຄວາມມຸ່ງໝາຍ ແລະຈຸດປະສົງຂອງເຮົາສຳເລັດຜົນຖືກຕ້ອງ
ເຮົາຈະເຮັດໃຫ້ທາງທຸກສາຍທີ່ ໄຊຣັດ ດຳເນີນໄປຊື່ກົງ
ລາວຈະສ້າງ ເຢຣູຊາເລັມ ນະຄອນຂອງເຮົາໃໝ່
ແລະປ່ອຍພວກຊະເລີຍຂອງເຮົາເປັນອິດສະຫລະ
ບໍ່ມີຜູ້ໃດຈ້າງ ຫລືໃຊ້ສິນບົນໃຫ້ລາວເຮັດການນີ້”
ພຣະຜູ້ເປັນເຈົ້າອົງມີອຳນາດຍິ່ງໃຫຍ່ຊົງກ່າວດັ່ງນີ້ແຫລະ.
14 ພຣະຜູ້ເປັນເຈົ້າ ຊົງບອກ ອິສຣາເອນ ວ່າ,
“ຊັບພະຍາກອນຂອງ ເອຢິບ ແລະຂອງ ເອທີໂອເປຍ ຈະເປັນຂອງເຈົ້າ
ຄົນ ເຊບາ ທີ່ສູງໃຫຍ່ຈະຮັບໃຊ້ເຈົ້າ
ແລະຜູກໂສ້ຕິດຕາມເຈົ້າໄປ
ພວກເຂົາຈະກົ້ມລົງຮັບສາລະພາບວ່າ
ພຣະເຈົ້າຊົງຢູ່ນຳທ່ານ ຊົງເປັນ ພຣະຜູ້ເປັນເຈົ້າ ແຕ່ພຣະອົງດຽວ.
15 ພຣະເຈົ້າ ຂອງ ອິສຣາເອນ ອົງຊົງຊ່ອຍໄພ່ພົນຂອງພຣະອົງໃຫ້ພົ້ນໄພ
ຊົງເປັນ ພຣະເຈົ້າອົງຊົງລັບລີ້.”
16 ຄົນທັງຫລາຍທີ່ສ້າງຮູບເຄົາລົບຈະອັບອາຍຂາຍໜ້າ
ທຸກໆຄົນຈະເຊື່ອມເສຍສັກສີ.
17 ແຕ່ ອິສຣາເອນ ນັ້ນພຣະຜູ້ເປັນເຈົ້າ ຊົງຊ່ອຍໃຫ້ພົ້ນ
ພວກເຂົາຈະມີໄຊຊະນະຕະຫລອດໄປ
ແລະຈະບໍ່ເຊື່ອມເສຍສັກສີຈັກເທື່ອ.
18 ພຣະຜູ້ເປັນເຈົ້າ ຊົງສ້າງຟ້າສະຫວັນ

ພຣະອົງ ອົງ ດຽວຊົງເປັນພຣະເຈົ້າ
ຊົງປັ້ນແຕ່ງໂລກໃຫ້ໝັ້ນຄົງ
ພຣະອົງບໍ່ໄດ້ຊົງສ້າງມັນໃຫ້ຫວ່າງເປົ່າ
ແຕ່ຊົງສ້າງຄົນໃຫ້ອາໄສຢູ່
ແມ່ນພຣະອົງທີ່ຊົງກ່າວວ່າ, “ເຮົາເປັນພຣະຜູ້ເປັນເຈົ້າ
ບໍ່ມີພຣະເຈົ້າອົງອື່ນນອກຈາກເຮົາ.
19 ເຮົາບໍ່ໄດ້ກ່າວໃນທີ່ລັບລີ້
ຫລືບໍ່ໄດ້ປິດອຳນາດຄວາມມຸ່ງໝາຍໄວ້
ເຮົາບໍ່ໄດ້ຂໍຮ້ອງໃຫ້ຄົນອິສຣາເອນສະແຫວງຫາເຮົາໃນບ່ອນມືດ
ເຮົາເປັນພຣະຜູ້ເປັນເຈົ້າ ແລະເວົ້າແຕ່ຄວາມຈິງ
ເຮົາຈຶ່ງຮູ້ຈັກເວົ້າປະກາດໃນສິ່ງທີ່ຖືກຕ້ອງ.”

## ພຣະຜູ້ເປັນເຈົ້າກັບຮູບເຄົາລົບຂອງບາບີໂລນ

20 ພຣະຜູ້ເປັນເຈົ້າຊົງກ່າວວ່າ,
“ໄພ່ພົນທີ່ລອດພົ້ນຈາກອຳນາດກະສັດທັງຫລາຍ ຈົ່ງມາໂຮມກັນ
ເພື່ອແຈ້ງໂທດຂອງພວກເຈົ້າເອງ
ຄົນທັງຫລາຍທີ່ແຫ່ຮູບເຄົາລົບທີ່ເຮັດດ້ວຍໄມ້
ແລະອ້ອນວອນຕໍ່ພະທີ່ຊ່ອຍຫຍັງບໍ່ໄດ້
ຄົນເຫລົ່ານີ້ບໍ່ຮູ້ຈັກທີບຫຍັງເລີຍ!
21 ພວກເຈົ້າຈົ່ງມາ ແລະແຈ້ງຄວາມຕໍ່ສານ
ໃຫ້ພວກຈຳເລີຍປຶກສາຫາລືຊຶ່ງກັນແລະກັນ
ໃຜບອກລ່ວງໜ້າເຖິງສິ່ງທີ່ຈະເກີດຂຶ້ນນັ້ນໄດ້?
ແລະໃຜທຳນວຍເລື່ອງນີ້ໄວ້ຕັ້ງແຕ່ເຫິງມາແລ້ວ?
ບໍ່ແມ່ນເຮົາ ຄືພຣະຜູ້ເປັນເຈົ້າອົງຊົງຊ່ອຍໄພ່ພົນໃຫ້ພົ້ນບໍ?
ບໍ່ມີພຣະເຈົ້າອື່ນນອກຈາກເຮົາ.
22 ມະນຸດທຸກມຸມໂລກເອີຍ ຈົ່ງຄືນມາຫາເຮົາ
ແລະຮັບເອົາການຊ່ອຍເຫລືອໃຫ້ພົ້ນເທີ້ນ
ເຮົາເປັນພຣະເຈົ້າແຕ່ຜູ້ດຽວ ບໍ່ມີພຣະເຈົ້າອົງອື່ນ.
23 ສິ່ງທີ່ເຮົາເວົ້ານີ້ເປັນຄວາມຈິງ
ຈະບໍ່ມີການປ່ຽນແປງ
ເຮົາໄດ້ປະຕິຍານໄວ້ຢ່າງເດັດຂາດວ່າ
ທຸກຄົນຈະຄຸເຂົ່າລົງຕໍ່ໜ້າເຮົາ
ແລະສາບານວ່າຈະສັດຊື່ຕໍ່ເຮົາ.
24 ພວກເຂົາຈະເວົ້າເຖິງເຮົາວ່າ

ມີໄຊຊະນະ ແລະມີອານຸພາບ
ຄົນທັງຫລາຍທີ່ກຽດຊັງເຮົາຈະໄດ້ຮັບຄວາມອັບອາຍຂາຍໜ້າ.
25 ເຮົາຄືພຣະຜູ້ເປັນເຈົ້າຈະຊ່ອຍເຊື້ອສາຍທັງໝົດຂອງອິສຣາເອນ
ແລະພວກເຂົາຈະມີຄວາມພາກພູມໃຈໃນເຮົາ.

# ບົດທີ 46

1 "ພະເບນກໍເຈື່ອນລົງ ພະເນໂບກໍລົ້ມລົງ ຮູບຂອງພະນີ້ຢູ່ເທິງສັດ
ແລະງົວ ສິ່ງເຫລົ່ານີ້ທີ່ເຈົ້າຫາມຢູ່ກໍມາບັນທຸກເປັນພາລະ ເທິງຫລັງສັດທີ່ອິດເມື່ອຍ
2 ມັນລົ້ມລົງ ແລະມັນເຈື່ອນລົງນຳກັນ
ມັນຊ່ວຍປ້ອງກັນພາລະນັ້ນບໍ່ໄດ້ ມັນເອງກໍຕົກໄປເປັນຊະເລີຍ
3 ໂອ ວົງວານຂອງຢາໂຄບເອີຍ ຈົ່ງຟັງເຮົາ
ຄືບັນດາຄົນທີ່ເຫລືອຢູ່ໃນວົງວານຂອງອິສຣາເອນ
ຜູ້ຊຶ່ງເຮົາອຸ້ມມາຕັ້ງແຕ່ກຳເນີດ ຍົກມາຕັ້ງແຕ່ໃນທ້ອງແມ່
4 ຈົນເຈົ້າເຖົ້າ ເຮົາກໍຄືພຣະອົງນັ້ນ ເຮົາຈະອຸ້ມເຈົ້າຈົນເຈົ້າຜົມຫງອກ
ເຮົາໄດ້ສ້າງ ເຮົາຈະຍົກໄວ້ ເຮົາຈະອຸ້ມ ແລະເຮົາຈະຊ່ອຍໃຫ້ພົ້ນ

5 ເຈົ້າຈະທຽບເຮົາ ແລະເຮັດກັບເຮົາໃຫ້ເທົ່າກັບຜູ້ໃດ
ແລະປຽບເຮົາ ວ່າເຮົາຄືກັນ
6 ບັນດາຜູ້ທີ່ເອົາຄຳອອກຈາກໄຖ່ ແລະຊັ່ງເງິນໃນຕາຊັ່ງ
ຈ້າງຊ່າງຄຳຄົນໜຶ່ງ ແລະລາວກໍເຮັດໃຫ້ເປັນພະ
ແລ້ວພວກເຂົາທັງຫລາຍກໍຂາບລົງ ແລະ ນະມັດສະການ
7 ພວກເຂົາທັງຫລາຍເອົາຮູບນັ້ນໃສ່ບ່າ ພວກເຂົາຫາມໄປ ເຂົາຕັ້ງໄວ້ປະຈຳທີ່
ຮູບນັ້ນກໍຢູ່ທັ້ນ ຮູບນັ້ນໄປຈາກບ່ອນບໍ່ໄດ້ ແມ່ນຜູ້ໃດຈະມາຮ້ອງຂໍ
ຮູບນັ້ນກໍບໍ່ຕອບ ຫລືຊ່ອຍລາວໃຫ້ລອດພົ້ນຈາກຄວາມຍາກລຳບາກຂອງຕົນໄດ້

8 ຈື່ຂໍ້ນີ້ໄວ້ ແລະຈົ່ງເປັນລູກຜູ້ຊາຍແທ້
ເຈົ້າຜູ້ລະເມີດທັງຫລາຍ ຈົ່ງນຶກໄວ້ໃນໃຈ
9 ຈົ່ງຈື່ສິ່ງທີ່ລ່ວງໄປແລ້ວໃນສະໄໝກ່ອນໄວ້ ເພາະວ່າເຮົາເປັນພຣະເຈົ້າ
ແລະບໍ່ມີພະອື່ນໃດອີກ ເຮົາເປັນພຣະເຈົ້າແລະບໍ່ມີພະອື່ນໃດຄືເຮົາ
10 ແຕ່ຕົ້ນເດີມ ເຮົາແຈ້ງຂັ້ນຕອນທັງໝົດໃຫ້ຮູ້ຕັ້ງແຕ່ຕົ້ນ
ແລະແຈ້ງເຖິງສິ່ງທີ່ຍັງບໍ່ໄດ້ເຮັດ
ໃຫ້ຮູ້ຕັ້ງແຕ່ບູຮານກ່າວວ່າ 'ແຜນງານຂອງເຮົາຈະຢັ້ງຢືນ
ແລະເຮົາຈະເຮັດໃຫ້ຄວາມປະສົງຂອງເຮົາສຳເລັດທັງໝົດ'
11 ເອີ້ນນົກມາຈາກຕາເວັນອອກ
ຄືເອີ້ນຊາຍທີ່ເຮັດຕາມແຜນງານຂອງເຮົາຈາກເມືອງໄກ

ເຮົາເວົ້າແລ້ວ ແລະເຮົາຈະໃຫ້ເປັນໄປ ເຮົາໄດ້ໝາຍໄວ້ໃນໃຈແລ້ວ
ແລະເຮົາຈະກະທຳໃຫ້ສຳເລັດດ້ວຍ

12 ເຈົ້າຜູ້ຈິດໃຈດື້ດ້ານ
ເຈົ້າຜູ້ຫ່າງໄກຈາກຄວາມຊອບທຳ ຈົ່ງຟັງເຮົາເທີ້ນ
13 ເຮົາຈະນຳຄວາມຊອບທຳຂອງເຮົາມາໃກ້ ມັນຈະບໍ່ໄກເລີຍ
ແລະຄວາມພົ້ນຂອງເຮົາຈະບໍ່ລໍຊ້າ ເຮົາຈະໃສ່ຄວາມພົ້ນທີ່ຊີໂອນ
ເພື່ອອິສຣາເອນສະຫງ່າລາສີຂອງເຮົາ”

# ບົດທີ 47

## ບາບີໂລນຈະຖືກການພິພາກສາ

1 ໂອ ຍິງສາວພົມມະຈາລີແຫ່ງບາບີໂລນເອີຍ ຈົ່ງລົງມານັ່ງໃນຂີ້ຝຸ່ນດິນ
ໂອ ລູກສາວຂອງຊາວຄັນເດອາເອີຍ ຈົ່ງນັ່ງລົງເທິງພື້ນດິນ
ບໍ່ມີບັນລັງ ເພາະວ່າເຂົາຈະບໍ່ເອີ້ນເຈົ້າອີກວ່າ ຍິງສາວອ່ອນລະອຽດ
2 ຈົ່ງເອົາຫີນໂມ້ ແລະຈົ່ງໂມ້ເຂົ້າ ໂມ້ແປ້ງ ເອົາຜ້າປົກໜ້າຂອງເຈົ້າອອກ
ຖອດເສື້ອຊັ້ນນອກຂອງເຈົ້າອອກ ບໍ່ຕ້ອງປົກຂາຂອງເຈົ້າ ຈົ່ງລຸຍນໍ້າໄປ
3 ເຈົ້າຈະຕ້ອງຖືກເປືອຍກາຍ ແລະເຂົາຈະເຫັນຄວາມອາຍຂອງເຈົ້າ
ເຮົາຈະເຮັດການແກ້ແຄ້ນ ແລະເຮົາຈະບໍ່ພົບເຈົ້າຢ່າງມະນຸດ
4 ພຣະຜູ້ໄຖ່ຂອງເຮົາ ພຣະນາມຂອງພຣະອົງຄືພຣະຜູ້ເປັນເຈົ້າແຫ່ງຈັກກະວານ
ເປັນອົງບໍລິສຸດຂອງອິສຣາເອນ

5 ໂອ ລູກສາວຂອງຊາວຄັນເດອາເອີຍ ນັ່ງງຽບໆ ແລະຈົ່ງເຂົ້າໄປໃນຄວາມມືດ
ເພາະວ່າເຂົາຈະບໍ່ເອີ້ນເຈົ້າອີກວ່າ ພະລາຊິນີແຫ່ງລາຊະອານາຈັກທັງຫລາຍ
6 ເຮົາໂກດຮ້າຍຕໍ່ຊົນຊາດຂອງເຮົາ ເຮົາເຮັດໃຫ້ມໍລະດົກຂອງເຮົາເປັນມົນທິນ
ເຮົາມອບພວກເຂົາໄວ້ໃນມືຂອງເຈົ້າ ເຈົ້າບໍ່ໄດ້ສະແດງຄວາມກະລຸນາຕໍ່ພວກເຂົາ
ເຈົ້າວາງແອກຢ່າງໜັກໄວ້ເທິງບ່າຂອງຄົນຊະລາ
7 ເຈົ້າເວົ້າວ່າ “ຂ້ອຍຈະເປັນພະລາຊິນີຕະຫລອດໄປເປັນນິດ”
ເຈົ້າຈຶ່ງບໍ່ໄດ້ເອົາເລື່ອງເຫລົ່ານີ້ເປັນທີ່ສອນໃຈ
ຫລືຈົດຈຳບັ້ນປາຍຂອງເລື່ອງເຫລົ່ານີ້ໄວ້

8 ສະນັ້ນ ເຈົ້າຜູ້ຮັກຄວາມເພີດເພີນ ຈົ່ງຟັງເລື່ອງນີ້ ຄືຜູ້ນັ່ງຢ່າງປອດໄພ
ຜູ້ຄິດໃນໃຈຂອງຕົນວ່າ “ຂ້ອຍນີ້ແຫລະ ແລະບໍ່ມີຜູ້ໃດອື່ນອີກ
ຂ້ອຍຈະບໍ່ນັ່ງຢູ່ເປັນແມ່ໝ້າຍ ຫລືພັດພາກຈາກລູກ”
9 ທັງສອງເລື່ອງນີ້ຈະມາເຖິງເຈົ້າໃນມື້ດຽວ ຄືລູກເຈົ້າຈະຕາຍ ແລະການເປັນແມ່ໝ້າຍ
ຈະມາເຖິງເຈົ້າຢ່າງເຕັມຂະໜາດ ທັງທີ່ມີວິຊາອາຄົມເປັນຈຳນວນຫລາຍ

ແລະລິດທານຸພາບຍິ່ງໃຫຍ່ໃນເວດມົນຂອງເຈົ້າ

10 ດ້ວຍວ່າເຈົ້າຮູ້ສຶກໝັ້ນໃຈຢູ່ໃນຄວາມຊົ່ວຂອງເຈົ້າ
ເຈົ້າເວົ້າວ່າ "ບໍ່ມີຜູ້ໃດເຫັນຂ້ອຍ"
ສະຕິປັນຍາຂອງເຈົ້າແລະຄວາມຮູ້ຂອງເຈົ້າ ເຮັດໃຫ້ເຈົ້າຫລົງທາງໄປ
ແລະເຈົ້າຈຶ່ງກ່າວໃນໃຈຂອງເຈົ້າວ່າ "ມີແຕ່ຂ້ອຍຜູ້ດຽວ ແລະບໍ່ມີຜູ້ໃດອື່ນອີກ"
11 ສະນັ້ນ ຄວາມຊົ່ວຮ້າຍຈະມາເໜືອເຈົ້າ ຊຶ່ງເຈົ້າຈະບໍ່ຮູ້ວ່າມັນຂຶ້ນມາຈາກໃສ
ໄພພິບັດຈະຕົກເໜືອເຈົ້າ ຊຶ່ງເຈົ້າຈະບໍ່ສາມາດຫລີກໄດ້
ແລະຄວາມຈິບຫາຍຈະມາເຖິງເຈົ້າທັນທີທັນໃດ ຊຶ່ງເຈົ້າບໍ່ຮູ້ເລື່ອງເລີຍ

12 ຈົ່ງຕັ້ງໝັ້ນຢູ່ໃນເວດມົນຂອງເຈົ້າ ແລະວິຊາອາຄົມຈຳນວນຫລາຍຂອງເຈົ້າ
ຊຶ່ງເຈົ້າເຮັດມາຫລາຍແລ້ວຕັ້ງແຕ່ສາວ
ເຫດວ່າມັນຈະເປັນປະໂຫຍດແກ່ເຈົ້າໄດ້ ຫາກວ່າເຈົ້າຈະມີໄຊ
13 ເຈົ້າອິດເມື່ອຍກັບທີ່ປຶກສາເປັນຈຳນວນຫລາຍຂອງເຈົ້າ ໃຫ້ພວກເຂົາລຸກຂຶ້ນມາ
ແລະຊ່ວຍເຈົ້າໃຫ້ລອດພົ້ນ ຄືບັນດາຜູ້ທີ່ແບ່ງຟ້າສະຫວັນ ແລະເບິ່ງດວງດາວ
ຜູ້ຊຶ່ງທຳນວຍໃຫ້ເຈົ້າໃນມື້ຂຶ້ນຄ່ຳວ່າ ຈະເກີດອັນໃດຂຶ້ນແກ່ເຈົ້າ

14 ເບິ່ງແມ ພວກເຂົາຈະເປັນຄືກັບຕໍເຂົ້າ ໄຟຈະເຜົາຜານ
ພວກເຂົາຈະຊ່ວຍຕົວເອງໃຫ້ພົ້ນຈາກກຳລັງຂອງແປວໄຟບໍ່ໄດ້
ນີ້ບໍ່ແມ່ນຖ່ານທີ່ຈະໃຫ້ໃຜອຸ່ນ ບໍ່ແມ່ນໄຟທີ່ຈະໃຫ້ໃຜຜີງ
15 ບັນດາຄົນທີ່ເຈົ້າເຮັດວຽກນຳນັ້ນຈະເປັນດັ່ງນີ້ແກ່ເຈົ້າ ຜູ້ຊຶ່ງຄ້າມາກັບເຈົ້າຕັ້ງແຕ່ສາວ
ພວກເຂົາຕ່າງກໍພະເນຈອນໄປມາໃນທາງຂອງຕົນເອງ
ບໍ່ມີຜູ້ໃດຈະຊ່ວຍເຈົ້າໃຫ້ລອດພົ້ນໄດ້

# ບົດທີ 48

## ພຣະສັນຍາຕ່າງໆ ແກ່ອິສຣາເອນ

1 ຈົ່ງຟັງຂໍ້ນີ້ເທີ້ນ ໂອ ວົງວານຂອງຢາໂຄບເອີຍ
ຜູ້ຊຶ່ງເຂົາເອີ້ນດ້ວຍນາມຂອງອິສຣາເອນ
ແລະຜູ້ຊຶ່ງອອກມາຈາກນ້ຳທັງຫລາຍຂອງຢູດາ
ຜູ້ຊຶ່ງປະຕິຍານໃນພຣະນາມຂອງພຣະຜູ້ເປັນເຈົ້າ
ແລະກ່າວເຖິງພຣະເຈົ້າຂອງອິສຣາເອນ
ແຕ່ບໍ່ແມ່ນດ້ວຍສັດຈະ ແລະຄວາມຊອບທຳ
2 ເພາະວ່າພວກເຂົາຂະໜານນາມຂອງຕົນເອງຕາມນະຄອນບໍລິສຸດ
ແລະເພິ່ງອາໄສພຣະເຈົ້າຂອງອິສຣາເອນ
ພຣະນາມຂອງພຣະອົງວ່າພຣະຜູ້ເປັນເຈົ້າແຫ່ງຈັກກະວານ

3 “ສິ່ງທີ່ລ່ວງໄປແລ້ວເຮົາໄດ້ແຈ້ງໃຫ້ຮູ້ແຕ່ເກົ່າກ່ອນ ແລະ ມັນໄປຈາກປາກຂອງເຮົາ
ແລະເຮົາໄດ້ເລົ່າໃຫ້ຟັງທົ່ວແລ້ວ
ໃນທັນໃດນັ້ນ ເຮົາກໍໄດ້ກະທຳ ແລະກໍເປັນໄປຕາມນັ້ນ
4 ເພາະວ່າເຮົາຮູ້ຢູ່ວ່າເຈົ້າດື້ດ້ານ ແລະຄໍຂອງເຈົ້າກໍຄືເອັນເຫລັກ
ແລະໜ້າຜາກຂອງເຈົ້າເປັນທອງເຫລືອງ
5 ເຮົາກໍແຈ້ງເລື່ອງເຫລົ່ານັ້ນແກ່ເຈົ້າໃຫ້ຮູ້ຕັ້ງແຕ່ເກົ່າກ່ອນ ກ່ອນທີ່ມັນຈະເກີດຂຶ້ນ
ເຮົາກໍໄດ້ເວົ້າໃຫ້ເຈົ້າຟັງແລ້ວ ຢ້ານເຈົ້າຈະເວົ້າວ່າ
‘ຮູບເຄົາລົບຂອງຂ້ອຍເຮັດເອງ ຮູບເຄົາລົບສະຫລັກ
ແລະຮູບເຄົາລົບຫລໍ່ຂອງຂ້ອຍບັນຊາມັນມາ’
6 ເຈົ້າໄດ້ຍິນແລ້ວ ຈົ່ງຄອຍຖ້າເບິ່ງສິ່ງທັງປວງນີ້ ແລະເຈົ້າຈະບໍ່ແຈ້ງໃຫ້ຮູ້ບໍ
ຕັ້ງແຕ່ເວລານີ້ໄປ ເຮົາເລົ່າສິ່ງໃໝ່ໃຫ້ເຈົ້າຟັງ ເປັນສິ່ງທີ່ປິດເຊື່ອງໄວ້ຊຶ່ງເຈົ້າບໍ່ຮູ້
7 ເປັນສິ່ງທີ່ສ້າງຂຶ້ນໃໝ່ ບໍ່ແມ່ນຕັ້ງແຕ່ເກົ່າກ່ອນ ກ່ອນມື້ນີ້ເຈົ້າບໍ່ເຄີຍໄດ້ຍິນ
ຢ້ານເຈົ້າຈະເວົ້າວ່າ ‘ເບິ່ງແມ ເຮົາຮູ້ແລ້ວ’
8 ເຈົ້າບໍ່ເຄີຍໄດ້ຍິນ ແລະ ເຈົ້າບໍ່ເຄີຍຮູ້ ແລະ ຕັ້ງແຕ່ເວລານັ້ນຫູຂອງເຈົ້າຍັງບໍ່ເປີດ
ເພາະວ່າເຮົາຮູ້ວ່າເຈົ້າຈະປະພຶດຢ່າງທໍລະຍົດ ແລະຮູ້ວ່າ
ຕັ້ງແຕ່ເກີດມາ ພວກເຂົາກໍເອີ້ນເຈົ້າວ່າ ຜູ້ລະເມີດ
9 ເພາະວ່າເຫັນແກ່ນາມຂອງເຮົາ ເຮົາຈະຖ່ວງດຶງຄວາມໂກດຮ້າຍຂອງເຮົາໄວ້
ເພາະເຫັນແກ່ຄວາມສັນລະເສີນຂອງເຮົາ ເຮົາຈະລະງັບໄວ້ເພື່ອເຈົ້າ
ເພື່ອເຮົາຈະບໍ່ໄດ້ຕັດເຈົ້າອອກໄປ
10 ເບິ່ງແມ ເຮົາໄດ້ຊຳລະລ້າງເຈົ້າແລ້ວ ແຕ່ບໍ່ແມ່ນດ້ວຍເງິນ
ເຮົາໄດ້ເລືອກສັນເຈົ້າໃນເຕົາຂອງຄວາມທຸກໃຈ
11 ເຮົາຈະກະທຳເຊັ່ນນັ້ນເພາະວ່າເຫັນແກ່ເຮົາເອງ
ເພາະວ່ານາມຂອງເຮົາຈະຖືກຢຽບຢາມຢ່າງໃດໄດ້ ສະຫງ່າລາສີຂອງເຮົາ
ເຮົາຈະບໍ່ໃຫ້ໃຜອື່ນອີກ
12 ຟັງເຮົາເທີ້ນ ໂອຢາໂຄບເອີຍ ແລະອິສຣາເອນ
ຜູ້ຊຶ່ງເຮົາເອີ້ນມາ ເຮົາຄືພຣະອົງດຽວ ເຮົາເປັນຕົ້ນ ແລະເຮົາເປັນປາຍດ້ວຍ
13 ມືຂອງເຮົາໄດ້ວາງຮາກຖານແຜ່ນດິນໂລກ
ແລະມືຂວາຂອງເຮົາໄດ້ກາງຟ້າສະຫວັນອອກ
ເມື່ອເຮົາເອີ້ນມັນ ມັນກໍອອກມາຢູ່ນຳກັນ
14 ເຈົ້າທັງປວງ ຈົ່ງຊຸມນຸມກັນ ແລະຄອຍຖ້າຟັງ
ຜູ້ໃດໃນທ່າມກາງພວກນັ້ນໄດ້ປະກາດສິ່ງເຫລົ່ານີ້
ພຣະຜູ້ເປັນເຈົ້າຮັກທ່ານ ທ່ານຈະເຮັດຕາມພຣະໄທຂອງພຣະອົງຕໍ່ບາບີໂລນ
ແລະແຂນຂອງພຣະອົງຈະຕໍ່ສູ້ກັບຊາວຄັນເດອາ

[15] ເຮົາເອງໄດ້ເວົ້າ ແລະ ໄດ້ເອີ້ນຜູ້ນັ້ນມາ ເຮົາໄດ້ໃຊ້ຜູ້ນັ້ນມາ
ແລະເພິ່ນຈະຈະເລີນໃນທາງຂອງຕົນ
[16] ຈົ່ງຫຍັບເຂົ້າມາໃກ້ເຮົາ ຟັງເລື່ອງນີ້ ຕັ້ງແຕ່ຕົ້ນເດີມເຮົາບໍ່ໄດ້ເວົ້າໃນທີ່ລັບລີ້
ຕັ້ງແຕ່ມັນເກີດມາ ເຮົາກໍຢູ່ທີ່ນັ້ນແລ້ວ”
ແລະບັດນີ້ ອົງພຣະຜູ້ເປັນເຈົ້າພຣະເຈົ້າ
ແລະພຣະວິນຍານຂອງພຣະອົງໄດ້ໃຊ້ຂ້າພະເຈົ້າມາ
[17] ພຣະຜູ້ເປັນເຈົ້າຜູ້ໄຖ່ຂອງເຈົ້າ ອົງບໍລິສຸດຂອງອິສຣາເອນບອກດັ່ງນີ້ວ່າ
“ເຮົາຄືພຣະຜູ້ເປັນເຈົ້າພຣະເຈົ້າຂອງເຈົ້າ ຜູ້ສັ່ງສອນເຈົ້າເພື່ອປະໂຫຍດຂອງເຈົ້າ
ຜູ້ນຳເຈົ້າໃນທາງທີ່ເຈົ້າຄວນຈະໄປ
[18] ໂອ ຖ້າເຈົ້າໄດ້ຟັງບັນຍັດຂອງເຮົາແລ້ວ
ຄວາມສຸກສົມບູນຂອງເຈົ້າຈະເປັນຄືກັບແມ່ນໍ້າ
ແລະຄວາມຊອບທຳຂອງເຈົ້າຈະເປັນຄືກັບຄື້ນທະເລ
[19] ເຊື້ອສາຍຂອງເຈົ້າຈະເປັນຄືກັບເມັດຊາຍ
ແລະລູກຫລານຈາກບັ້ນແອວຂອງເຈົ້າຄືເມັດຊາຍ
ຊື່ຂອງພວກເຂົາຈະບໍ່ຖືກຕັດອອກເລີຍ ຫລືຖືກທຳລາຍຈາກໜ້າເຮົາ”
[20] ຈົ່ງໄປຈາກບາບີໂລນຈົ່ງໜີອອກຈາກຄົນຄັນເດອາ
ຈົ່ງປະກາດຂໍ້ນີ້ດ້ວຍສຽງຮ້ອງເພງ ຈົ່ງເລົ່າໃຫ້ຟັງ
ຈົ່ງສົ່ງອອກໄປເຖິງສຸດປາຍແຜ່ນດິນໂລກ ວ່າ
“ພຣະຜູ້ເປັນເຈົ້າໄຖ່ຢາໂຄບຜູ້ຮັບໃຊ້ຂອງພຣະອົງແລ້ວ”
[21] ເມື່ອພຣະອົງນຳພວກເຂົາທັງຫລາຍໄປທາງທະເລຊາຍ
ພວກເຂົາກໍບໍ່ໄດ້ກະຫາຍ ພຣະອົງເຮັດໃຫ້ນໍ້າໄຫລຈາກກ້ອນຫີນເພື່ອພວກເຂົາ
ພຣະອົງຜ່າກ້ອນຫີນ ແລະນໍ້າກໍໄຫລອອກມາ
[22] ພຣະຜູ້ເປັນເຈົ້າບອກວ່າ “ບໍ່ມີສັນຕິສຸກ ແກ່ຄົນຊົ່ວ”

# ບົດທີ 49

## ຊົນຊາດທັງຫລາຍໄດ້ຮັບແສງສະຫວ່າງ

[1] ຊົນຊາດທ່າງໄກເອີຍ ຈົ່ງຟັງຂ້າພະເຈົ້າ
ຄືພຣະຜູ້ເປັນເຈົ້າຊົງເລືອກເອົາຂ້າພະເຈົ້າຕັ້ງແຕ່ຢູ່ໃນທ້ອງແມ່
ແລະຊົງແຕ່ງຕັ້ງໃຫ້ເປັນຜູ້ຮັບໃຊ້ຂອງພຣະອົງ.
[2] ພຣະອົງຊົງເຮັດໃຫ້ຄຳເວົ້າຂອງຂ້າພະເຈົ້າແຫລມຄົມເໝືອນຄົມດາບ
ຊົງຄຸ້ມຄອງຂ້າພະເຈົ້າດ້ວຍພຣະຫັດຂອງພຣະອົງ
ຊົງເຮັດໃຫ້ຂ້າພະເຈົ້າແຫລມຄົມເໝືອນລູກທະນູ
ແລະພ້ອມແລ້ວທີ່ຈະເກັບມ້ຽນໄວ້ໃນບັ້ງແຫລ້ງຂອງພຣະອົງ.

3 ພຣະອົງຊົງບອກຂ້າພະເຈົ້າວ່າ,
“ອິສຣາເອນ ເອີຍ ເຈົ້າເປັນຜູ້ຮັບໃຊ້ເຮົາ
ຄົນທັງຫລາຍຈະສັນລະເສີນເຮົາຍ້ອນເຈົ້າ.”
4 ຂ້າພະເຈົ້າເວົ້າວ່າ, “ຂ້າພະເຈົ້າໄດ້ເຮັດວຽກ
ແຕ່ວຽກນັ້ນບໍ່ມີປະໂຫຍດ
ຂ້າພະເຈົ້າໄດ້ເສຍແຮງໄປລ້າໆ ແຕ່ບໍ່ມີຫຍັງສຳເລັດຜົນ”
ຂ້າພະເຈົ້າໄວ້ວາງໃຈແລະມອບທຸກສິ່ງໄວ້ກັບ ພຣະຜູ້ເປັນເຈົ້າ
ພຣະອົງຊົງຈະມອບຄ່າຕອບແທນວຽກງານໃຫ້ຂ້າພະເຈົ້າ.
5 ພຣະຜູ້ເປັນເຈົ້າ ຊົງແຕ່ງຕັ້ງຂ້າພະເຈົ້າຕັ້ງແຕ່ຢູ່ໃນທ້ອງແມ່
ຊົງໃຫ້ຂ້າພະເຈົ້າເປັນຜູ້ຮັບໃຊ້ຂອງພຣະອົງ
ເພື່ອນຳພາ ອິສຣາເອນ ໄພ່ພົນຂອງພຣະອົງ
ທີ່ກະຈັດກະຈາຍກັນຢູ່ນັ້ນກັບຄືນມາຫາພຣະອົງ
ພຣະຜູ້ເປັນເຈົ້າ ຊົງໃຫ້ກຽດແກ່ຂ້າພະເຈົ້າ
ແລະຊົງເປັນເຫື່ອແຮງຂອງຂ້າພະເຈົ້າ.
6 ພຣະຜູ້ເປັນເຈົ້າ ຊົງບອກຂ້າພະເຈົ້າວ່າ,
“ເຮົາມີວຽກສຳລັບເຈົ້າຜູ້ຮັບໃຊ້ຂອງເຮົາດັ່ງນີ້:
ເຈົ້າບໍ່ພຽງແຕ່ເຮັດໃຫ້ ອິສຣາເອນ ທີ່ເຫລືອຢູ່ຍິ່ງໃຫຍ່ຄືເກົ່າເທົ່ານັ້ນ
ແຕ່ເຮົາຈະເຮັດໃຫ້ເຈົ້າເປັນແສງສະຫວ່າງແກ່ຊົນຊາດທັງຫລາຍ
ເພື່ອຄົນໃນທົ່ວໂລກນີ້ຈະໄດ້ລອດພົ້ນ.”
7 ພຣະເຈົ້າ ອົງບໍລິສຸດ ແລະຜູ້ຊ່ອຍໄຖ່ໃຫ້ພົ້ນຂອງ ອິສຣາເອນ
ຊົງກ່າວຕໍ່ຄົນທີ່ຖືກກຽດຊັງ ແລະໝິ່ນປະໝາດຢ່າງໜັກຈາກຊົນຊາດ
ແລະຂ້ອຍຂ້າເຈົ້ານາຍວ່າ,
“ພະລາຊາທັງຫລາຍຈະເຫັນເຈົ້າເປັນອິດສະຫລະ
ແລະຈະຊົງລຸກຂຶ້ນສະແດງຄວາມເຄົາລົບ
ເຈົ້າຊາຍທັງຫລາຍກໍຈະເຫັນຄືກັນ
ພວກເພິ່ນຈະກົ້ມລົງຄຳນັບເຈົ້າ”
ເຫດການນີ້ຈະເກີດຂຶ້ນກໍຍ້ອນວ່າ ພຣະຜູ້ເປັນເຈົ້າ
ຄື ພຣະເຈົ້າ ອົງສັດຊື່ ແລະບໍລິສຸດຂອງ ອິສຣາເອນ ຊົງເລືອກເອົາຜູ້ຮັບໃຊ້
ແລະເຮັດຕາມຄຳໝັ້ນສັນຍາຂອງພຣະອົງ.

## ການສ້າງເຢຣູຊາເລັມຂຶ້ນໃໝ່

8 ພຣະຜູ້ເປັນເຈົ້າ ຊົງບອກໄພ່ພົນຂອງພຣະອົງວ່າ,
“ເມື່ອເຖິງເວລາຊ່ອຍໃຫ້ເຈົ້າພົ້ນ ເຮົາຈະສະແດງຄວາມຮັກ
ໄມຕີຕໍ່ເຈົ້າ ແລະຈະຕອບຄຳຮ້ອງໄຫ້ ຂໍຄວາມຊ່ອຍເຫລືອຂອງເຈົ້າ

ເຮົາຈະຄຸ້ມຄອງຮັກສາເຈົ້າ
ແລະຈະໃຫ້ເຈົ້າຜູກສຳພັນທະໄມຕີກັບຄົນທັງປວງ
ເຮົາຈະໃຫ້ເຈົ້າຕັ້ງຖິ່ນຖານບ້ານເຮືອນອີກເທື່ອໜຶ່ງ
ຢູ່ໃນດິນແດນອັນຮົກຮ້າງວ່າງເປົ່າ.
9 ເຮົາຈະເວົ້າກັບນັກໂທດວ່າ, “ອອກມາເສຍ” ແລະເວົ້າກັບຜູ້ຢູ່ໃນຄວາມ
ມືດວ່າ, “ອອກມາສູ່ແສງສະຫວ່າງເຖີ້ນ!”
ພວກເຂົາຈະເປັນເໝືອນແກະທີ່ກິນຫຍ້າຢູ່ຕາມພູ.
10 ພວກເຂົາຈະບໍ່ອຶດເຂົ້າອຶດນ້ຳອີກຈັກເທື່ອ
ແສງຕາເວັນແລະລົມຮ້ອນຈະບໍ່ຖືກຕ້ອງພວກເຂົາ
ເພາະວ່າພຣະອົງຊົງເມດຕາສົງສານຮັກແພງພວກເຂົາ
ຈະຊົງນຳພາໄປຍັງບໍ່ນ້ຳ.
11 ເຮົາຈະສ້າງທາງຫລວງຂ້າມພູທັງຫລາຍ
ແລະຈັດຕຽມທາງໃຫ້ໄພ່ພົນຂອງເຮົາໄປ.
12 ໄພ່ພົນຂອງພຣະອົງຈະມາແຕ່ໄກ
ຄືມາຈາກທາງເໜືອ ທາງຕາເວັນຕົກ ແລະຈາກເມືອງສີນີມທາງໃຕ້.”
13 ໂອ ຟ້າສະຫວັນເອີຍ ຈົ່ງຮ້ອງເພງເຖີ້ນ!
ໂອ ແຜ່ນດິນເອີຍ ຈົ່ງມ່ວນຊື່ເບີກບານເຖີ້ນ!
ຂໍໃຫ້ພູທັງຫລາຍຮ້ອງເພງອອກມາ
ພຣະຜູ້ເປັນເຈົ້າຊົງເລົ້າໂລມໄພ່ພົນຂອງພຣະອົງ
ແລະຈະຊົງສົງສານໄພ່ພົນທີ່ຕົກທຸກໄດ້ຍາກ.
14 ແຕ່ຊາວເຢຣູຊາເລັມເວົ້າວ່າ,
“ພຣະຜູ້ເປັນເຈົ້າຊົງປະຖິ້ມພວກເຮົາແລ້ວ!
ພຣະອົງຊົງຫລົງລືມພວກເຮົາແລ້ວ!”
15 ດັ່ງນັ້ນພຣະຜູ້ເປັນເຈົ້າຈຶ່ງຊົງຕອບວ່າ,
“ຜູ້ຍິງທີ່ລືມລູກ ແລະບໍ່ຮັກລູກຂອງຕົນເອງມີບໍ?
ເຖິງແມ່ນວ່າມີຜູ້ລືມລູກຂອງຕົນກໍຕາມ
ແຕ່ເຮົາຈະບໍ່ລືມພວກເຈົ້າຈັກເທື່ອ.
16 ເຢຣູຊາເລັມເອີຍ ເຮົາບໍ່ເຄີຍລືມເຈົ້າ
ເຮົາໄດ້ຂຽນຊື່ຂອງເຈົ້າໄວ້ໃນຝາມືຂອງເຮົາແລ້ວ.
17 ຜູ້ທີ່ຈະສ້າງເຈົ້າຂຶ້ນໃໝ່ກຳລັງຈະມາແລ້ວ
ແລະຜູ້ທີ່ທຳລາຍເຈົ້າກໍຈະໜີໄປ.
18 ຈົ່ງເບິ່ງໃຫ້ທົ່ວວ່າມີຫຍັງຈະເກີດຂຶ້ນ
ປະຊາຊົນຂອງເຈົ້າຈະມາໂຮມກັນ

ພວກເຂົາຈະມາບ້ານ
ເຮົາເປັນພຣະເຈົ້າທີ່ມີຊີວິດແນ່ນອນ
ເຈົ້າຈະດີໃຈນຳປະຊາຊົນຂອງເຈົ້າ
ເໝືອນດັ່ງເຈົ້າສາວດີໃຈນຳແຫວນໝັ້ນຂອງຕົນ.
19 ແຜ່ນດິນຂອງເຈົ້າໄດ້ຖືກທຳລາຍຮ້າງເປົ່າ
ແຕ່ບັດນີ້ມັນຈະແຄບເກີນໄປສຳລັບຜູ້ຈະມາຢູ່ທີ່ນັ້ນ
ຄົນທັງຫລາຍທີ່ເຄີຍກືນກິນພວກເຈົ້າ
ຈະຖືກຂັບໄລ່ໃຫ້ໜີໄປໄກ.
20 ລູກທີ່ເກີດໃນຍາມທີ່ເຈົ້າຖືກເນລະເທດຈະເວົ້າຕໍ່ເຈົ້າໃນມື້ໜຶ່ງວ່າ,
“ດິນທີ່ເຮົາຢູ່ນີ້ແຄບເກີນໄປແລ້ວ
ພວກເຮົາຢາກໄດ້ບ່ອນຢູ່ທີ່ກວ້າງກວ່ານີ້!”
21 ແລ້ວເຈົ້າກໍຈະຖາມຕົວເອງວ່າ,
“ໃຜນໍອອກລູກເຫລົ່ານີ້ໃຫ້ຂ້າພະເຈົ້າ
ຂ້າພະເຈົ້າໄດ້ສູນເສຍລູກໄປແລະຈະບໍ່ມີຄືເກົ່າອີກ
ຂ້າພະເຈົ້າຖືກເນລະເທດໄປໄກ
ແມ່ນໃຜນໍເອົາລູກເຫລົ່ານີ້ຄືນມາ
ຂ້າພະເຈົ້າຖືກປະປ່ອຍໃຫ້ຢູ່ຜູ້ດຽວ
ແລ້ວລູກເຫລົ່ານີ້ມາແຕ່ໃສນໍ?”
22 ພຣະຜູ້ເປັນເຈົ້າຊົງບອກໄພ່ພົນຂອງພຣະອົງວ່າ,
“ເຮົາຈະກວັກມືເອົາຊົນຊາດທັງຫລາຍ
ພວກເຂົາຈະນຳເອົາລູກຂອງເຈົ້າມາ.
23 ກະສັດທັງຫລາຍຈະເປັນເໝືອນພໍ່ຂອງເຈົ້າ
ແລະພະລາຊິນີທັງຫລາຍຈະເປັນເໝືອນແມ່ຂອງເຈົ້າ
ພວກເພິ່ນຈະກົ້ມລົງໃຫ້ກຽດເຈົ້າ
ແລະຈະສະແດງຄວາມເຄົາລົບຢຳເກງເຈົ້າ
ແລ້ວເຈົ້າຈະຮູ້ວ່າເຮົາຄືພຣະຜູ້ເປັນເຈົ້າ
ຜູ້ທີ່ລໍຄອຍໃຫ້ຊ່ອຍເຫລືອຈະບໍ່ຜິດຫວັງ.”
24 ຜູ້ໃດຈະເອົາເຄື່ອງທີ່ທະຫານຍາດຊີງມາໄດ້?
ຫລືຈະຊ່ອຍເອົານັກໂທດໃຫ້ພົ້ນຈາກຜູ້ກົດຂີ່ໄດ້ບໍ?
25 ພຣະຜູ້ເປັນເຈົ້າຊົງຕອບວ່າ,
“ການນີ້ຈະເກີດຂຶ້ນແນ່ນອນ
ຄືພວກຊະເລີຍທີ່ທະຫານຈັບມາກໍຈະຖືກເອົາໄປ
ແລະສິ່ງຂອງທີ່ຜູ້ກົດຂີ່ຍາດຊີງມາກໍຈະຖືກຍຶດໄປ

ເຮົາຈະຕໍ່ສູ້ຜູ້ທີ່ຕໍ່ສູ້ເຈົ້າ
ແລະຈະຊ່ອຍລູກຂອງເຈົ້າໃຫ້ພົ້ນ.
26 ເຮົາຈະໃຫ້ຜູ້ບີບບັງຄັບເຈົ້າຂ້າຟັນກັນແລະກັນ
ພວກເຂົາຈະເມົາເລືອດຂອງຕົນເອງເໝືອນເມົາເຫລົ້າ
ແລ້ວມະນຸດທັງປວງຈະຮູ້ວ່າເຮົາຄື ພຣະຜູ້ເປັນເຈົ້າ
ຜູ້ທີ່ຊ່ອຍໄຖ່ເຈົ້າໃຫ້ເປັນອິດສະຫລະ ແລະພົ້ນໄພ
ພວກເຂົາຈະຮູ້ວ່າເຮົາເປັນ ພຣະເຈົ້າ ອົງຍິ່ງໃຫຍ່ຂອງ ອິສຣາເອນ.”

# ບົດທີ 50

1 ພຣະຜູ້ເປັນເຈົ້າ ບອກດັ່ງນີ້ວ່າ “ໜັງສືຢ່າຂອງແມ່ເຈົ້າ ຜູ້ຊຶ່ງເຮົາໄດ້ໄລ່ໄປນັ້ນ ຢູ່ໃສ
ຫລືເຈົ້າໜີ້ຂອງເຮົາຄືຄົນໃດທີ່ເຮົາໄດ້ຂາຍຕົວເຈົ້າໄປ
ເບິ່ງແມ ເພາະວ່າຄວາມຊົ່ວຊ້າຂອງເຈົ້າ ເຈົ້າຈຶ່ງຖືກຂາຍ
ແລະເພາະການລະເມີດຂອງເຈົ້າ ແມ່ຂອງເຈົ້າຈຶ່ງຖືກໄລ່ໄປ
2 ເປັນຫຍັງ ເມື່ອເຮົາມາຈຶ່ງບໍ່ມີໃຜເລີຍ
ເມື່ອເຮົາຮ້ອງເອີ້ນຈຶ່ງບໍ່ມີໃຜຕອບ ມືຂອງເຮົາສັ້ນ ໄຖ່ບໍ່ໄດ້ບໍ
ແລະເຮົາບໍ່ມີກຳລັງທີ່ຈະຊ່ອຍໃຫ້ພົ້ນບໍ
ເບິ່ງແມ ເຮົາໃຫ້ນ້ຳທະເລແຫ້ງດ້ວຍການຕິຕຽນຂອງເຮົາ
ເຮົາເຮັດໃຫ້ແມ່ນ້ຳເປັນຖິ່ນແຫ້ງແລ້ງກັນດານ
ປາຂອງແມ່ນ້ຳນັ້ນກໍເໝັນຍ້ອນຂາດນ້ຳ ແລະຕາຍ ຍ້ອນກະຫາຍນ້ຳ
3 ເຮົາຫົ່ມຟ້າສະຫວັນໄວ້ດ້ວຍຄວາມດຳມືດ ແລະເອົາຜ້າກະສອບມາປົກ”
4 ອົງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ໄດ້ປະທານໃຫ້
ຂ້າພະເຈົ້າມີລີ້ນຂອງບັນດາຜູ້ທີ່ພຣະອົງສອນ
ເພື່ອຂ້າພະເຈົ້າຈະໄດ້ຮູ້ບ່ອນຈະຄ້ຳຊູຜູ້ທີ່ອິດເມື່ອຍໄວ້ດ້ວຍຖ້ອຍຄຳ
ທຸກໆເຊົ້າພຣະອົງປຸກທີ່ຫູຂອງຂ້າພະເຈົ້າເພື່ອໃຫ້ຟັງເໝືອນຢ່າງຜູ້ທີ່ພຣະອົງສອນ
5 ອົງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ໄດ້ເປີດຫູຂ້າພະເຈົ້າ
ແລະຂ້າພະເຈົ້າກໍບໍ່ດື້ດ້ານ ຂ້າພະເຈົ້າບໍ່ຫັນກັບ
6 ຂ້າພະເຈົ້າຫັນຫລັງໃຫ້ແກ່ຜູ້ທີ່ຂ້ຽນຕີຂ້າພະເຈົ້າ
ແລະຫັນແກ້ມໃຫ້ແກ່ຄົນທີ່ດຶງເຄົາຂ້າພະເຈົ້າອອກ
ຂ້າພະເຈົ້າບໍ່ໜີໜ້າຈາກຄວາມອາຍແກ່ການຖົ່ມນ້ຳລາຍໃສ່
7 ເພາະວ່າອົງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຈະຊ່ວຍຂ້າພະເຈົ້າ
ເຫດສັນນັ້ນ ຂ້າພະເຈົ້າຈຶ່ງຈະບໍ່ຂາຍໜ້າ
ຂ້າພະເຈົ້າຈຶ່ງຕັ້ງໜ້າຂອງຂ້າພະເຈົ້າເໝືອນຢ່າງຫີນເຫລັກໄຟ
ແລະຂ້າພະເຈົ້າຮູ້ວ່າຂ້າພະເຈົ້າຈະບໍ່ອັບອາຍ

8 ພຣະອົງຜູ້ແກ້ແທນຂ້າພະເຈົ້າກໍຢູ່ໃກ້ ໃຜຈະສູ້ຄະດີກັບຂ້າພະເຈົ້າ
ກໍໃຫ້ເຮົາຢືນຢູ່ນຳກັນ ໃຜເປັນສັດຕູຂອງຂ້າພະເຈົ້າ ກໍໃຫ້ລາວມາໃກ້ຂ້າພະເຈົ້າ
9 ເບິ່ງແມ ອົງພຣະຜູ້ເປັນເຈົ້າພຣະເຈົ້າຈະຊ່ວຍຂ້າພະເຈົ້າ
ໃຜຈະກ່າວໂທດຂ້າພະເຈົ້າວ່າມີຄວາມຜິດ
ພວກເຂົາທຸກຄົນຈະຄ່ອຍໆໝົດໄປຄືກັບເສື້ອຜ້າ ໂຕມອດຈະກິນພວກເຂົາເຫລົ່ານັ້ນ
10 ໃຜແດ່ໃນພວກເຈົ້າຢ້ານຢຳພຣະຜູ້ເປັນເຈົ້າ
ແລະຟັງຄວາມສຽງຂອງຜູ້ຮັບໃຊ້ຂອງພຣະອົງ ຜູ້ດຳເນີນໃນຄວາມມືດ
ແລະບໍ່ມີຄວາມສະຫວ່າງ ຈົ່ງໃຫ້ລາວວາງໃຈໃນພຣະນາມພຣະຜູ້ເປັນເຈົ້າ
ແລະເພິ່ງອາໄສພຣະເຈົ້າຂອງລາວ
11 ເບິ່ງແມ ເຈົ້າທັງໝົດຜູ້ກໍ່ໄຟ ຜູ້ເອົາໂດ້ນໄຟຄາດຕົວເຈົ້າໄວ້
ຈົ່ງຍ່າງດ້ວຍແສງໄຟຂອງເຈົ້າ ແລະດ້ວຍແສງໂດ້ນໄຟ ຊຶ່ງເຈົ້າໄດ້ກໍ່
ເຈົ້າຈະໄດ້ຮັບຢ່າງນີ້ຈາກມືຂອງເຮົາ ຄືເຈົ້າຈະຕ້ອງນອນລົງດ້ວຍຄວາມເສົ້າໂສກ

# ບົດທີ 51

## ຄວາມເລົ້າໂລມສຳລັບຊີໂອນ

1 “ຈົ່ງຟັງເຮົາເທີ້ນ ເຈົ້າທັງຫລາຍຜູ້ຕິດຕາມຄວາມຊອບທຳ
ເຈົ້າຜູ້ສະແຫວງຫາພຣະຜູ້ເປັນເຈົ້າຈົ່ງເບິ່ງຫີນຊຶ່ງໄດ້ສະກັດຕົວເຈົ້າມາ
ແລະຈົ່ງເບິ່ງບໍ່ຫີນຊຶ່ງຂຸດເອົາຕົວເຈົ້າທັງຫລາຍມາ
2 ຈົ່ງເບິ່ງອັບຣາຮາມບັນພະບູລຸດຂອງເຈົ້າທັງຫລາຍ ແລະເບິ່ງຊາຣາຜູ້ເກີດເຈົ້າ
ເພາະວ່າເມື່ອມີເພິ່ນຢູ່ແຕ່ຄົນດຽວ ເຮົາໄດ້ຮ້ອງເອີ້ນເພິ່ນ
ແລະເຮົາອວຍພອນເພິ່ນແລະກະທຳໃຫ້ເປັນຄົນຫລວງຫລາຍ
3 ເພາະວ່າພຣະຜູ້ເປັນເຈົ້າຈະເລົ້າໂລມຊີໂອນ
ພຣະອົງຈະເລົ້າໂລມບ່ອນຮ້າງທັງໝົດຂອງເມືອງ
ແລະຈະເຮັດຖິ່ນແຫ້ງແລ້ງກັນດານຂອງເມືອງຄືສວນເອເດັນ
ແລະທະເລຊາຍຂອງເມືອງຄືສວນຂອງພຣະຜູ້ເປັນເຈົ້າຈະພົບຄວາມຊື່ນບານ
ແລະຄວາມຍິນດີໃນເມືອງ ທັງການໂມທະນາ ແລະສຽງເພງ
4 ຊົນຊາດຂອງເຮົາເອີຍ ຈົ່ງຟັງສຽງຂອງເຮົາ ຊາດຂອງເຮົາເອີຍ
ຈົ່ງຫງ່ຽງຫູຟັງເຮົາ ເພາະວ່າພຣະບັນຍັດຈະອອກໄປຈາກເຮົາ
ແລະຄວາມຍຸດຕິທຳຈະອອກໄປເປັນຄວາມສະຫວ່າງຂອງຊົນຊາດທັງຫລາຍ
5 ຄວາມຊອບທຳຂອງເຮົາໃກ້ເຂົ້າມາແລ້ວ ແລະຄວາມພົ້ນຂອງເຮົາໄດ້ອອກໄປແລ້ວ
ແຂນຂອງເຮົາຈະພິພາກສາຊົນຊາດທັງຫລາຍ ເກາະທັງຫລາຍຈະຄອຍຖ້າເຮົາ
ແລະພວກເຂົາຈະຫວັງຄອຍຖ້າແຂນຂອງເຮົາ
6 ຈົ່ງແຫງນໜ້າເບິ່ງຟ້າສະຫວັນ ແລະເບິ່ງໂລກເບື້ອງລຸ່ມ

ເພາະວ່າຟ້າສະຫວັນຈະສູນສິ້ນໄປຄືຄວັນ
ແລະແຜ່ນດິນໂລກຈະຄ່ອຍໆໝົດໄປຄືເສື້ອຜ້າ
ແລະພວກເຂົາທັງຫລາຍຜູ້ອາໄສຢູ່ໃນນັ້ນຈະຕາຍໄປຄືກັນ
ແຕ່ຄວາມພົ້ນຂອງເຮົາຈະຢູ່ເປັນນິດ
ແລະຄວາມຊອບທຳຂອງເຮົາຈະບໍ່ສິ້ນສຸດເລີຍ
7 ຈົ່ງຟັງເຮົາ ເຈົ້າທັງຫລາຍຜູ້ຮູ້ເຖິງຄວາມຊອບທຳ
ຊົນຊາດຊຶ່ງພຣະບັນຍັດຂອງເຮົາຢູ່ໃນໃຈ
ຢ່າຢ້ານການຕຳໜິຂອງມະນຸດ
ແລະຢ່າວິຕົກຕໍ່ການກ່າວຄຳຫຍາບຄາຍຂອງພວກເຂົາ
8 ເພາະວ່າໂຕມອດຈະກິນພວກເຂົາຄືກິນເສື້ອຜ້າ
ແລະໂຕໜອນຈະກິນພວກເຂົາຄືກິນຂົນແກະ
ແຕ່ຄວາມຊອບທຳຂອງເຮົາຈະຢູ່ເປັນນິດ
ແລະຄວາມພົ້ນຂອງເຮົາຈະຢູ່ຕະຫລອດທຸກຊົ່ວອາຍຸ
9 ພຣະກອນຂອງ**ພຣະຜູ້ເປັນເຈົ້າ**ຈົ່ງຕື່ນເຖີດ ຕື່ນເຖີດ
ຈົ່ງສວມກຳລັງ ຈົ່ງຕື່ນເໝືອນຢ່າງສະໄໝເກົ່າກ່ອນໃນຊົ່ວອາຍຸທີ່ດົນມາແລ້ວ
ບໍ່ແມ່ນທ່ານບໍທີ່ຖອນລະຫັດເປັນຕ່ອນໆ
ແລະແທງມັງກອນທະລຸ
10 ທ່ານບໍ່ແມ່ນບໍທີ່ເຮັດໃຫ້ທະເລແຫ້ງໄປ ຄືນໍ້າຂອງມະຫາສະມຸດໃຫຍ່
ຊຶ່ງເຮັດໃຫ້ບ່ອນເລິກຂອງທະເລເປັນຫົນທາງ
ເພື່ອໃຫ້ຜູ້ທີ່ໄດ້ໄຖ່ໄວ້ແລ້ວຍ່າງຜ່ານໄປ
11 ສະນັ້ນ ຜູ້ທີ່ໄຖ່ໄວ້ແລ້ວຂອງ**ພຣະຜູ້ເປັນເຈົ້າ**ຈະກັບມາ
ແລະຮ້ອງເພງມາໃນເມືອງຊີໂອນ
ຄວາມຊື່ນບານເປັນນິດຈະຢູ່ເທິງຫົວຂອງພວກເຂົາ
ພວກເຂົາຈະໄດ້ຮັບຄວາມຊື່ນບານ
ແລະຄວາມຍິນດີ ຄວາມໂສກເສົ້າ ແລະການໄວ້ທຸກຈະໜີໄປ
12 ເຮົາ ຄືເຮົາເອງ ຜູ້ເລົ້າໂລມເຈົ້າ
ເຈົ້າເປັນຜູ້ໃດຈຶ່ງຢ້ານມະນຸດຜູ້ຕ້ອງຕາຍ
ຄືຢ້ານລູກຂອງມະນຸດຊຶ່ງຖືກເຮັດໃຫ້ຄືຫຍ້າ
13 ແລະໄດ້ລືມ**ພຣະຜູ້ເປັນເຈົ້າ**ຜູ້ສ້າງເຈົ້າ ຜູ້ກາງຟ້າສະຫວັນ
ແລະວາງຮາກຖານຂອງແຜ່ນດິນໂລກ ແລະຢ້ານຢູ່ເລື້ອຍໄປຕະຫລອດມື້
ເພາະວ່າຄວາມຮ້າຍກາດຂອງຜູ້ບີບບັງຄັບ ເມື່ອລາວຕັ້ງຕົວລາວວ່າຈະທຳລາຍ
ແລະຄວາມຮ້າຍກາດຂອງຜູ້ບີບບັງຄັບຢູ່ໃສ
14 ຜູ້ໃດທີ່ເປັນຊະເລີຍ ບໍ່ຊ້າບໍ່ນານຈະໄດ້ຮັບການປົດປ່ອຍ

ເພື່ອພວກເຂົາຈະບໍ່ຕາຍໃນຂຸມ ທັງອາຫານຂອງພວກເຂົາຈະບໍ່ຂາດ
15 ເພາະວ່າເຮົາຄືພຣະຜູ້ເປັນເຈົ້າພຣະເຈົ້າຂອງເຈົ້າ ຜູ້ແບ່ງແຍກທະເລ
ແລະຄື້ນຄະນອງ ພຣະນາມຂອງພຣະອົງຄືພຣະຜູ້ເປັນເຈົ້າແຫ່ງຈັກກະວານ
16 ແລະເຮົາໄດ້ໃສ່ຖ້ອຍຄຳຂອງເຮົາໃນປາກຂອງເຈົ້າ
ແລະເຊື່ອງເຈົ້າໄວ້ໃນຮົ່ມມືຂອງເຮົາ ຊຶ່ງຕັ້ງຟ້າສະຫວັນ
ແລະວາງຮາກຖານຂອງແຜ່ນດິນໂລກ ແລະກ່າວແກ່ເມືອງຊີໂອນວ່າ
'ເຈົ້າເປັນຊົນຊາດຂອງເຮົາ'"
17 ໂອເຢຣູຊາເລັມເອີຍ ຈົ່ງປຸກຕົວເຈົ້າເອງ ຈົ່ງປຸກຕົວເອງ ຈົ່ງຢືນຂຶ້ນເຖີດ
ເຈົ້າຜູ້ໄດ້ດື່ມຈາກມືຂອງພຣະຜູ້ເປັນເຈົ້າຊຶ່ງຖ້ວຍແຫ່ງພຣະພິໂລດຂອງພຣະອົງ
ຜູ້ໄດ້ດື່ມ ຊຶ່ງຖ້ວຍແຫ່ງຄວາມໂຊເຊ ແລະດູດມັນອອກ
18 ໃນບັນດາລູກຊາຍທີ່ນາງເກີດມາ ກໍບໍ່ມີຜູ້ໃດນຳນາງ
ໃນບັນດາລູກຊາຍທີ່ນາງລ້ຽງມາ ກໍບໍ່ມີໃຜຈູງມືນາງ
19 ສອງສິ່ງນີ້ໄດ້ເກີດຂຶ້ນແກ່ເຈົ້າ ຜູ້ໃດຈະຄ່ຳຄວນເພື່ອເຈົ້າ ຄືການລ້າງຜານ
ແລະການທຳລາຍ ການອຶດຢາກອາຫານ ແລະດາບ ຜູ້ໃດຈະເລົ້າໂລມເຈົ້າ
20 ລູກຊາຍຂອງເຈົ້າສະຫລົບໄປແລ້ວ ພວກເຂົານອນຢູ່ທຸກຫົວຖະໜົນຄືງົວປ່າຕິດແຫ
ພວກເຂົາທັງຫລາຍເຕັມໄປດ້ວຍພຣະພິໂລດຂອງພຣະຜູ້ເປັນເຈົ້າ
ແລະການຕິຕຽນຂອງພຣະເຈົ້າຂອງເຈົ້າ
21 ສະນັ້ນ ເຈົ້າຜູ້ຖືກຂົ່ມໃຈ
ຜູ້ຊຶ່ງມຶນເມົາແຕ່ບໍ່ແມ່ນດ້ວຍເຫລົ້າອະງຸ່ນ ຈົ່ງຟັງຂໍ້ນີ້ເຖີດ
22 ອົງພຣະຜູ້ເປັນເຈົ້າຂອງເຈົ້າພຣະຜູ້ເປັນເຈົ້າພຣະເຈົ້າຂອງເຈົ້າ
ຜູ້ສູ້ຄະດີແຫ່ງຊົນຊາດຂອງພຣະອົງ ບອກດັ່ງນີ້ວ່າ
"ເບິ່ງແມ ເຮົາໄດ້ເອົາຖ້ວຍແຫ່ງຄວາມໂຊເຊມາຈາກມືຂອງເຈົ້າ
ແລ້ວໃນຖ້ວຍແຫ່ງຄວາມພິໂລດຂອງເຮົາ ເຈົ້າຈະບໍ່ຕ້ອງດື່ມອີກ
23 ແຕ່ເຮົາຈະໃສ່ມັນໄວ້ໃນມືຂອງຜູ້ທໍລະມານເຈົ້າ ຜູ້ໄດ້ເວົ້າກັບຈິດໃຈເຈົ້າວ່າ
'ກົ້ມລົງ ເຮົາຈະໄດ້ຂ້າມໄປ' ແລະເຈົ້າໄດ້ເຮັດໃຫ້ຫລັງຂອງເຈົ້າຄືພື້ນດິນ
ແລະຄືຖະໜົນເພື່ອໃຫ້ພວກເຂົາຂ້າມໄປ"

# ບົດທີ 52

## ພຣະເຈົ້າຈະຊົງປົດປ່ອຍເຢຣູຊາເລັມ

1 ເຢຣູຊາເລັມເອີຍ ຈົ່ງເຂັ້ມແຂງ ແລະລຸກຕື່ນຂຶ້ນ
ນະຄອນສັກສິດຂອງພຣະເຈົ້າເອີຍ ຈົ່ງນຸ່ງຫົ່ມຜ້າແພງາມໆ ເທີ້ນ
ຄົນນອກສາດສະໜາຈະບໍ່ເຂົ້າມາຫາເຈົ້າອີກ.
2 ເຢຣູຊາເລັມເອີຍ ຈົ່ງຕໍ່ສູ້ເພື່ອອິດສະຫລະພາບ

ຈົ່ງລຸກຂຶ້ນຈາກດິນແດນ ແລະນັ່ງເທິງບັນລັງເທີ້ນ
ພວກຊະເລີຍຊາວຊີໂອນເອີຍ ຈົ່ງແກ້ໂສ້ທີ່ເຂົາຜູກເຈົ້າອອກ.
3 ພຣະຜູ້ເປັນເຈົ້າຊົງບອກໄພ່ພົນຂອງພຣະອົງວ່າ,
“ເຈົ້າໄດ້ຕົກເປັນທາດໂດຍບໍ່ມີລາຄາ
ເຈົ້າຈະບໍ່ຖືກໄຖ່ດ້ວຍເງິນ
ຫລືມູນຄ່າແຕ່ຢ່າງໃດ
ແຕ່ເຈົ້າຈະໄດ້ເປັນອິດສະຫລະ
4 ເຈົ້າເຄີຍເປັນຄົນຕ່າງຊາດຢູ່ໃນເອຢິບເທື່ອໜຶ່ງແລ້ວ
ພາຍລຸນມາອັດຊີເຣຍໄດ້ກົດຂີ່ເຈົ້າຢ່າງໜັກ.
5 ແລ້ວສິ່ງດຽວກັນນີ້ກໍເກີດຂຶ້ນອີກໃນບາບີໂລນ
ເຈົ້າຖືກຈັບເປັນຊະເລີຍຢູ່ໃນທີ່ນັ້ນຢ່າງບໍ່ມີຄຸນຄ່າ
ຄົນທັງຫລາຍທີ່ປົກຄອງເຈົ້າກໍອວດດີ
ແລະສະແດງຄວາມໝິ່ນປະໝາດເຮົາຢູ່ສະເໝີ.
6 ແຕ່ເມື່ອເຖິງວັນນັ້ນ ເຈົ້າຈະຍອມຮັບວ່າ
ເຮົາຜູ້ເວົ້າຕໍ່ເຈົ້ານີ້ແຫລະຄືພຣະຜູ້ເປັນເຈົ້າ.”
7 ຜູ້ສົ່ງຂ່າວທີ່ກຳລັງຂ້າມພູມາ
ກໍງາມວິເສດຫລາຍ!
ເພິ່ນນຳເອົາຂ່າວດີ ຂ່າວສັນຕິສຸກມາ
ເພິ່ນຮ້ອງປະກາດໄຊຊະນະ ແລະເວົ້າຕໍ່ພູຊີໂອນວ່າ,
“ພຣະເຈົ້າຂອງເຈົ້າຊົງເປັນກະສັດ!”
8 ພວກທີ່ຍາມເມືອງກໍຮ້ອງສຽງດັງ
ຮ້ອງເພງພ້ອມກັນດ້ວຍຄວາມມ່ວນຊື່ນ
ເພາະວ່າພວກເຂົາເຫັນພຣະຜູ້ເປັນເຈົ້າກັບມາທີ່ພູຊີໂອນດ້ວຍຕາຕົນເອງ.
9 ເຢຣູຊາເລັມທີ່ຮ້າງເປົ່າເອີຍ! ຈົ່ງຮ້ອງເພງດ້ວຍຄວາມມ່ວນຊື່ນເທີ້ນ
ເພາະພຣະຜູ້ເປັນເຈົ້າຊົງເລົ້າໂລມຊົນຊາດຂອງພຣະອົງ
ແລະຊົງຊ່ອຍໄຖ່ໃຫ້ນະຄອນຂອງພຣະອົງພົ້ນໄພ.
10 ພຣະຜູ້ເປັນເຈົ້າຊົງໃຊ້ອຳນາດອັນສັກສິດຂອງພຣະອົງ
ຊົງຊ່ອຍໃຫ້ໄພ່ພົນຂອງພຣະອົງພົ້ນໄພ
ຄົນທັງໂລກກໍໄດ້ເຫັນການຊ່ອຍນັ້ນ.
11 ພວກເຈົ້າທີ່ຖືເລື່ອງສັກສິດ
ຈົ່ງອອກມາຈາກບາບີໂລນດຽວນີ້!
ຢ່າແຕະຕ້ອງສິ່ງທີ່ເຮົາຫວງຫ້າມ
ຈົ່ງຮັກສາຕົວເຈົ້າໃຫ້ບໍລິສຸດ ແລະອອກໄປຈາກເມືອງເສຍ.

12 ເວລານີ້ເຈົ້າບໍ່ຕ້ອງຟ້າວອອກໄປ
ບໍ່ຕ້ອງຫລົບຫລີກໜີໄປ
ເພາະວ່າພຣະຜູ້ເປັນເຈົ້າຂອງເຈົ້າຈະນຳໜ້າເຈົ້າໄປ
ແລະຈະຊົງຮັກສາທາງຫລັງຕື່ມອີກ.

## ຄວາມທຸກລຳບາກຂອງຜູ້ຮັບໃຊ້ພຣະຜູ້ເປັນເຈົ້າ

13 ພຣະຜູ້ເປັນເຈົ້າຊົງກ່າວວ່າ,
“ຄົນໃຊ້ຂອງເຮົາຈະເຮັດພາລະກິດຂອງຕົນສຳເລັດ
ລາວຈະເປັນຜູ້ຍິ່ງໃຫຍ່ ແລະມີກຽດສູງ.
14 ເມື່ອຄົນທັງຫລາຍເຫັນລາວຈະສະທ້ານຢ້ານກົວ
ລາວເສຍຮູບໂສມຫລາຍເກືອບວ່າຈະບໍ່ເປັນມະນຸດ.
15 ແຕ່ຊາດທັງຫລາຍຈະອັດສະຈັນລາວ
ພວກກະສັດກໍຈະເວົ້າຫຍັງບໍ່ໄດ້ຍ້ອນວ່າຢ້ານລາວ
ບາງສິ່ງທີ່ພວກກະສັດບໍ່ເຄີຍຮູ້ເຄີຍເຫັນ
ກໍຈະເຫັນ ແລະເຂົ້າໃຈ.”

# ບົດທີ 53

1 ຄົນທັງຫລາຍໄດ້ຕອບວ່າ,
“ແມ່ນໃຜຈະເຊື່ອສິ່ງທີ່ເຮົາໄດ້ຍິນລາວແລ້ວ
ພຣະຫັດຂອງພຣະຜູ້ເປັນເຈົ້າຊົງສຳແດງຕໍ່ຜູ້ໃດ?
2 ມັນເປັນຄວາມມຸ່ງມາດປາດຖະໜາຂອງພຣະຜູ້ເປັນເຈົ້າ
ທີ່ຄົນໃຊ້ຂອງພຣະອົງໄດ້ຈະເລີນເຕີບໂຕ
ເໝືອນຕົ້ນໄມ້ປົ່ງຮາກໃນດິນແຫ້ງ
ຄົນໃຊ້ນັ້ນບໍ່ໄດ້ສະຫງ່າຜ່າເຜີຍ ຫລືຈົບງາມເລີຍ
ລາວບໍ່ມີຫຍັງພໍໃຫ້ເຮົາສັງເກດ
ບໍ່ມີຫຍັງພໍທີ່ຈະຮັກໄຄ່ປາດຖະໜາ
ລາວບໍ່ມີຫຍັງພໍທີ່ຈະດຶງດູດເຮົາ.
3 ເຮົາໄດ້ໝິ່ນປະໝາດ ແລະປະຖິ້ມລາວ
ລາວໄດ້ຮັບຄວາມລຳບາກ ແລະທົນຕໍ່ຄວາມເຈັບປວດ
ບໍ່ມີໃຜຈະຫລຽວແລລາວ
ເຮົາໄດ້ປະຖິ້ມລາວເໝືອນກັບລາວບໍ່ມີຫຍັງ.
4 ແຕ່ລາວໄດ້ທົນແບກເອົາຄວາມລຳບາກຂອງເຮົາ
ຄືຄວາມເຈັບປວດທີ່ເຮົາແບກຢູ່ນັ້ນ
ເຮົາຄຶດສະເໝີວ່າຄວາມລຳບາກຂອງລາວນັ້ນ

ແມ່ນການລົງໂທດຂອງພຣະເຈົ້າ.
5 ແຕ່ລາວຖືກບາດເຈັບຍ້ອນບາບຂອງເຮົາທັງຫລາຍ
ລາວຖືກຕີຍ້ອນພວກເຮົາເຮັດຊົ່ວ
ການລົງໂທດທີ່ລາວໄດ້ຮັບນັ້ນ ເຮັດໃຫ້ພວກເຮົາເປັນອິດສະຫລະສົມບູນ
ການທີ່ລາວຖືກຕີນັ້ນ ກໍເພື່ອໃຫ້ເຮົາຫາຍດີ.
6 ເຮົາທັງໝົດເປັນເໝືອນແກະທີ່ສູນເສຍແລ້ວ
ເຮົາທຸກຄົນຕ່າງດຳເນີນໄປຕາມທາງຂອງໃຜລາວ
ພຣະຜູ້ເປັນເຈົ້າຊົງລົງໂທດລາວ
ຄືໂທດທີ່ເຮົາທັງໝົດສົມຄວນໄດ້ຮັບ.
7 ລາວຖືກໝິ່ນປະໝາດຢ່າງເຈັບແສບ
ແຕ່ກໍມີຄວາມສຸພາບອ່ອນຫວານ
ລາວບໍ່ເວົ້າຈາຫຍັງເລີຍ
ເໝືອນລູກແກະທີ່ຖືກນຳໄປຂ້າ
ແລະເໝືອນແກະທີ່ຖືກເຂົາຕັດຂົນ
ລາວບໍ່ເວົ້າຫຍັງເລີຍ.
8 ລາວຖືກພິພາກສາລົງໂທດ ແລະນຳອອກໄປປະຫານ
ບໍ່ມີໃຜກັງວົນສົນໃຈໃນເຄາະກຳຂອງລາວເລີຍ
ລາວຖືກຂ້າຍ້ອນບາບຂອງຊົນຊາດເຮົາ.
9 ເຖິງແມ່ນວ່າລາວບໍ່ເຄີຍຂ້າຄົນ ຫລືເວົ້າຕົວະກໍຕາມ
ລາວກໍຈະຖືກຝັງໄວ້ໃນອຸບໂມງດຽວກັນ
ກັບຄາດຕະກອນ ແລະພວກເສດຖີ.”
10 ພຣະຜູ້ເປັນເຈົ້າຊົງກ່າວວ່າ,
“ມັນເປັນຄວາມຕັ້ງໃຈຂອງເຮົາທີ່ລາວຕ້ອງຮັບທຸກນັ້ນ
ຄວາມຕາຍເປັນເຄື່ອງໄຖ່ບາບເພື່ອນຳມາຊຶ່ງຄວາມລອດພົ້ນ
ດັ່ງນັ້ນ ລາວຈະເຫັນເຊື້ອສາຍຂອງລາວ
ມີຊີວິດຍືນຍາວ ແລະແຜນການຂອງເຮົາຈະສຳເລັດຍ້ອນລາວ.
11 ຫລັງຈາກມີຊີວິດຢູ່ດ້ວຍຄວາມທຸກແລ້ວ
ລາວຈະມີຄວາມສຸກອີກ
ລາວຈະຮູ້ວ່າຄວາມທຸກທີ່ໄດ້ຮັບນັ້ນມີປະໂຫຍດຫລາຍ
ລາວເປັນຄົນໃຊ້ທີ່ຊອບທຳຂອງເຮົາ
ລາວຈະແບກເອົາໂທດຂອງຄົນທັງຫລາຍ
ແລະຈະເຮັດໃຫ້ພວກເຂົາເປັນໄພ່ພົນຜູ້ສັດຊື່ຂອງເຮົາ.
12 ດັ່ງນັ້ນແຫລະ ເຮົາຈະໃຫ້ລາວໄດ້ຮັບກຽດ ໄດ້ເປັນໃຫຍ່

ແລະມີອຳນາດໃນທ່າມກາງຄົນທັງຫລາຍ
ລາວຍິນດີສະລະຊີວິດ
ແລະມີສ່ວນຮ່ວມຢູ່ນຳພວກຄາດຕະກອນ
ລາວໄດ້ຮັບແບກເອົາບາບຂອງຄົນຈຳນວນຫລາຍ
ແລະທົນຮັບເອົາໂທດທີ່ພວກເຂົາສົມຄວນໄດ້ຮັບ.”

# ບົດທີ 54

## ພຣະຜູ້ເປັນເຈົ້າຊົງຮັກອິສຣາເອນ

1 ເຢຣູຊາເລັມ ເອີຍ! ເຈົ້າເປັນເໝືອນຍິງໝັນ
ແຕ່ບັດນີ້ເຈົ້າຈົ່ງຮ້ອງເພງ ແລະມ່ວນຊື່ນເທີ້ນ!
ເຈົ້າຈະມີລູກຫລາຍກວ່າຍິງທີ່ມີຜົວ.
2 ຈົ່ງເຮັດໃຫ້ເຕັນທີ່ເຈົ້າອາໄສຢູ່ກວ້າງອອກ
ຈົ່ງຕໍ່ເຊືອກເຕັນໃຫ້ຍາວອອກ ແລະຝັງຫລັກມັນໃຫ້ແໜ້ນ.
3 ເຈົ້າຈະຂະຫຍາຍເຂດແດນອອກໄປທຸກດ້ານ
ປະຊາຊົນຂອງເຈົ້າຈະກັບຄືນປະເທດ
ຈະໄດ້ຊົນຊາດທັງຫລາຍມາຢູ່ພາຍໃຕ້ການປົກຄອງ
ເມືອງຮ້າງທັງຫລາຍຈະມີຄົນເຕັມຢູ່.
4 ຢ່າສູ່ຢ້ານ ເຈົ້າຈະບໍ່ເສື່ອມເສຍກຽດອີກ
ເຈົ້າຈະບໍ່ເສຍປຽບ
ເຈົ້າຈະລືມຄວາມບໍ່ສັດຊື່ໃນໄວສາວຂອງເຈົ້າ
ແລະລືມຄວາມງຽບເຫງົາເປົ່າປ່ຽວທີ່ສຸດຄາວເຈົ້າເປັນໝ້າຍ.
5 ພຣະຜູ້ເປັນເຈົ້າຈະເປັນເໝືອນຜົວຂອງເຈົ້າ
ພຣະນາມຂອງພຣະອົງຄື ພຣະຜູ້ເປັນເຈົ້າອົງຍິ່ງໃຫຍ່
ພຣະເຈົ້າບໍລິສຸດຂອງອິສຣາເອນຈະຊ່ອຍໄຖ່ເຈົ້າໃຫ້ພົ້ນໄພ
ພຣະອົງຊົງເປັນຜູ້ປົກຄອງໂລກ.
6 ອິສຣາເອນ ເອີຍ ເຈົ້າເປັນເໝືອນເມຍສາວ
ທີ່ຖືກຜົວປະຖິ້ມ ແລະອຸກອັ່ງທີ່ສຸດ
ແຕ່ພຣະຜູ້ເປັນເຈົ້າຊົງເອີ້ນເຈົ້າມາຫາ ແລະກ່າວວ່າ,
7 “ເຮົາໄດ້ປະຖິ້ມເຈົ້າຊົ່ວເວລາໜ້ອຍດຽວ
ເຮົາຈະເອົາເຈົ້າຄືນມາດ້ວຍຄວາມຮັກທີ່ສຸດ.
8 ເຮົາໄດ້ໂກດຮ້າຍເຈົ້າໃນຊົ່ວໄລຍະໜຶ່ງ ເຮົາຈຶ່ງໄດ້ເຊົາເບິ່ງແຍງເຈົ້າ
ແຕ່ເຮົາຈະສຳແດງຄວາມຮັກຕໍ່ເຈົ້າຕະຫລອດໄປ”
ພຣະຜູ້ເປັນເຈົ້າອົງຊົງຊ່ອຍໄຖ່ເຈົ້າໄດ້ກ່າວດັ່ງນີ້ແຫລະ.

9 “ເຮົາໄດ້ສັນຍາໄວ້ໃນສະໄໝຂອງໂນອາ
ວ່ານໍ້າຈະບໍ່ຖ້ວມໂລກອີກ
ບັດນີ້ເຮົາສັນຍາວ່າຈະບໍ່ໂກດຮ້າຍເຈົ້າອີກ
ເຮົາຈະບໍ່ຕິຕຽນ ຫລືລົງໂທດເຈົ້າ.
10 ພູໃຫຍ່ ແລະນ້ອຍທັງຫລາຍອາດພັງທະລາຍລົງ
ແຕ່ຄວາມຮັກຂອງເຮົາທີ່ມີຕໍ່ເຈົ້າຈະບໍ່ສິ້ນສຸດຈັກເທື່ອ
ເຮົາຈະຮັກສາສັນຍາສັນຕິພາບຂອງເຮົາໄວ້ຕະຫລອດໄປ”
ພຣະຜູ້ເປັນເຈົ້າອົງຊົງເມດຕາສົງສານເຈົ້າຊົງກ່າວດັ່ງນີ້ແຫລະ.

## ເຢຣູຊາເລັມໃໝ່

11 ພຣະຜູ້ເປັນເຈົ້າຊົງກ່າວວ່າ,
“ໂອເຢຣູຊາເລັມນະຄອນທີ່ລຳບາກ ແລະຂາດການຊ່ອຍເຫລືອເອີຍ
ບໍ່ມີໃຜປະເລົ້າປະໂລມເຈົ້າ
ເຮົາຈະວາງຮາກຖານຂອງເຈົ້າໄວ້ດ້ວຍເພັດ.
12 ເຮົາຈະສ້າງຫໍຄອຍຂອງເຈົ້າດ້ວຍທັບທິມ
ສ້າງປະຕູດ້ວຍຫີນທີ່ມີສີແດງເໝືອນໄຟ
ແລະສ້າງກຳແພງອ້ອມເຈົ້າໄວ້ດ້ວຍເພັດນິນຈິນດາ.
13 ເຮົາເອງຈະສອນປະຊາຊົນຂອງເຈົ້າ
ຈະໃຫ້ພວກເຂົາຈະເລີນຮຸ່ງເຮືອງ ແລະມີສັນຕິສຸກ.
14 ຄວາມຍຸດຕິທຳ ແລະຄວາມຖືກຕ້ອງຈະເຮັດໃຫ້ເຈົ້າໝັ້ນຄົງຖາວອນ
ຈະພົ້ນຈາກການກົດຂີ່ ແລະຄວາມຢ້ານ.
15 ຖ້າຜູ້ໃດໂຈມຕີເຈົ້າ
ພວກເຂົາກໍເຮັດໄປໂດຍຂາດຄວາມເຫັນຊອບຈາກເຮົາ
ຜູ້ໃດຕໍ່ສູ້ຂັດຂວາງເຈົ້າກໍຈະເຖິງຄວາມຈິບຫາຍ.
16 ເຮົາໄດ້ສ້າງຊ່າງເຫລັກ
ຄືຜູ້ເປົ່າໄຟ ແລະສ້າງອາວຸດ
ເຮົາໄດ້ສ້າງທະຫານ
ຄືຜູ້ໃຊ້ອາວຸດທຳລາຍດ້ວຍ.
17 ແຕ່ອາວຸດທີ່ສ້າງຂຶ້ນຈະບໍ່ສາມາດທຳລາຍເຈົ້າ
ເຈົ້າຈະຕອບໂຕ້ທຸກຄົນທີ່ຟ້ອງຮ້ອງເຈົ້າ
ເຮົາຈະຄຸ້ມຄອງຂ້າໃຊ້ຂອງເຮົາ
ແລະຈະໃຫ້ພວກເຂົາມີຄວາມອຸດົມສົມບູນ
ພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ແຫລະ.

# ບົດທີ 55

## ພຣະເຈົ້າຊົງປະທານພຣະກະລຸນາ

1 ພຣະຜູ້ເປັນເຈົ້າຊົງກ່າວວ່າ,
"ທຸກຄົນທີ່ຢາກນໍ້າ ເຊີນມາເທີ້ນ
ນໍ້າມີຢູ່ທີ່ນີ້!
ຜູ້ທີ່ບໍ່ມີເງິນໃຊ້ ເຊີນມາເທີ້ນ
ມາຊື້ເຂົ້າກິນສາ!
ເຊີນມາຊື້ເຫລົ້າອະງຸ່ນ ແລະນໍ້ານົມກິນ
ເຈົ້າບໍ່ຕ້ອງເສຍຄ່າຫຍັງດອກ!
2 ເປັນຫຍັງເຈົ້າຈຶ່ງຈ່າຍເງິນຊື້ສິ່ງທີ່ບໍ່ແມ່ນອາຫານ?
ເປັນຫຍັງເຈົ້າຈຶ່ງຈ່າຍໄປ ແຕ່ຍັງຫິວຢາກຢູ່?
ຈົ່ງຟັງເຮົາ ແລະເຮັດຕາມເຮົາບອກເທີ້ນ
ແລ້ວເຈົ້າຈະມ່ວນຊື່ນ ແລະມີອາຫານກິນດີທີ່ສຸດ.
3 ໄພ່ພົນຂອງເຮົາເອີຍ ຈົ່ງຟັງ ແລະມາຫາເຮົາເທີ້ນ
ຈົ່ງມາຫາເຮົາ ແລ້ວເຈົ້າຈະມີຊີວິດ
ເຮົາຈະໃຫ້ຄຳໝັ້ນສັນຍາອັນຕະຫລອດໄປແກ່ເຈົ້າ
ຈະອວຍພອນເຈົ້າດັ່ງທີ່ເຮົາສັນຍາແກ່ດາວິດ.
4 ເຮົາຈະເຮັດໃຫ້ລາວໄດ້ເປັນຜູ້ນຳ
ແລະຜູ້ບັນຊາການທະຫານຂອງຊົນຊາດທັງຫລາຍ
ຈະໃຫ້ລາວເປັນຜູ້ສະແດງຄວາມຍິ່ງໃຫຍ່ຂອງເຮົາ
ແກ່ຊົນຊາດທັງຫລາຍ.
5 ເຈົ້າຈະຮຽກຮ້ອງຊາວຕ່າງປະເທດ
ຊຶ່ງໃນເວລາໜຶ່ງພວກເຂົາບໍ່ຮູ້ຈັກເຈົ້າ
ແຕ່ບັດນີ້ພວກເຂົາຈະແລ່ນມາຮ່ວມກັບເຈົ້າ
ເຮົາພຣະຜູ້ເປັນເຈົ້າຂອງເຈົ້າ ຄືພຣະເຈົ້າອົງບໍລິສຸດຂອງອິສຣາເອນ
ຈະເຮັດໃຫ້ສິ່ງທັງໝົດນີ້ເກີດຂຶ້ນ.
ເຮົາຈະໃຫ້ກຽດ ແລະສະຫງ່າລາສີແກ່ເຈົ້າ."
6 ຈົ່ງຄືນມາຫາພຣະຜູ້ເປັນເຈົ້າ ແລະອ້ອນວອນຕໍ່ພຣະອົງ
ເພາະວ່າພຣະອົງຊົງຢູ່ໃກ້ໆ.
7 ຊົງໃຫ້ຄົນອະທຳໜີຈາກທາງດຳເນີນຊີວິດຂອງລາວ
ແລະຊົງປ່ຽນແປງແນວຄວາມຄິດຂອງລາວ
ຊົງໃຫ້ລາວກັບຄືນມາຫາພຣະຜູ້ເປັນເຈົ້າຂອງເຮົາ
ພຣະອົງຊົງເຕັມໄປດ້ວຍຄວາມເມດຕາ ແລະຊົງໃຫ້ອະໄພໄວ.

8 ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ຄວາມຄິດຂອງເຮົາບໍ່ເໝືອນຂອງພວກເຈົ້າ
ທາງຂອງເຮົາແຕກຕ່າງທາງຂອງເຈົ້າ
9 ຟ້າສະຫວັນຢູ່ສູງກວ່າໂລກສັນໃດ
ທາງ ແລະແນວຄິດຂອງເຮົາກໍສູງກວ່າຂອງເຈົ້າສັນນັ້ນ.
10 ຖ້ອຍຄຳຂອງເຮົາເປັນເໝືອນຫິມະ ແລະນໍ້າຝົນ
ຊຶ່ງລົງມາຈາກຟ້າ ແລະທົດໂລກໃຫ້ຊຸ່ມຊື່ນ
ແລ້ວກັບຄືນຂຶ້ນສູ່ຟ້າສະຫວັນ
ມັນສາມາດເຮັດໃຫ້ເຄື່ອງປູກຈະເລີນງອກງາມຂຶ້ນ
ມັນສາມາດໃຫ້ເມັດສຳລັບຫວ່ານ
ແລະໃຫ້ອາຫານສຳລັບກິນ.
11 ຖ້ອຍຄຳທີ່ເຮົາເວົ້າໄປນັ້ນ
ຈະເຮັດໃຫ້ສຳເລັດຜົນຕາມທີ່ເຮົາວາງໄວ້
ຈະເຮັດໃຫ້ທຸກໆສິ່ງຕາມທີ່ເຮົາໃຊ້ໄປເຮັດ ແລະກັບຄືນມາຫາເຮົາ.
12 ເຈົ້າຈະຈາກກຸງບາບີໂລນໄປດ້ວຍຄວາມມ່ວນຊື່ນ
ຈະຖືກນຳອອກຈາກເມືອງໄປດ້ວຍສະຫວັດດີພາບ
ພູໃຫຍ່ ແລະນ້ອຍທັງຫລາຍຈະເປັ່ງສຽງຮ້ອງເພງ
ຕົ້ນໄມ້ທັງຫລາຍກໍຈະຮ້ອງດ້ວຍຄວາມມ່ວນຊື່ນ.
13 ຕົ້ນໄມ້ສົນຈະງອກງາມຂຶ້ນມາແທນຕົ້ນມີໜາມ
ການນີ້ຈະເປັນໝາຍສຳຄັນຕະຫລອດໄປເປັນນິດ
ເປັນອະນຸສອນເຕືອນວ່າ ເຮົາພຣະຜູ້ເປັນເຈົ້າໄດ້ກະທຳດັ່ງນີ້ແຫລະ.”

# ບົດທີ 56

## ພຣະເຈົ້າຈະຮວບຮວມອິສຣາເອນທີ່ກະຈັດກະຈາຍໄປ

1 ພຣະຜູ້ເປັນເຈົ້າບອກດັ່ງນີ້ວ່າ “ຈົ່ງຮັກສາຄວາມຍຸດຕິທຳໄວ້
ແລະກະທຳຄວາມທ່ຽງທຳ ເພາະວ່າຄວາມພົ້ນຂອງເຮົາໃກ້ຈະມາ
ແລະຄວາມຊອບທຳຂອງເຮົາຈະເຜີຍອອກ
2 ຄວາມສຸກຄວນມີແກ່ຜູ້ກະທຳເຊັ່ນນີ້ ແລະແກ່ລູກຂອງມະນຸດຜູ້ຍຶດໄວ້ໝັ້ນ
ຜູ້ຖືຮັກສາວັນສະບາໂຕ ບໍ່ລະເມີດມື້ນັ້ນ
ແລະລະວັງມືຂອງຕົນຈາກການກະທຳຊົ່ວຮ້າຍໃດໆ”
3 ຢ່າໃຫ້ລູກຊາຍຂອງຄົນຕ່າງຊາດຜູ້ເຂົ້າເຊື່ອຖືພຣະຜູ້ເປັນເຈົ້າກ່າວວ່າ
“ພຣະຜູ້ເປັນເຈົ້າໄດ້ແຍກຂ້ອຍຈາກຊົນຊາດຂອງພຣະອົງ”
ແລະຢ່າໃຫ້ຂັນທີເວົ້າວ່າ “ເບິ່ງແມ ຂ້ອຍເປັນຕົ້ນໄມ້ແຫ້ງ”
4 ເພາະວ່າພຣະຜູ້ເປັນເຈົ້າບອກດັ່ງນີ້ວ່າ

"ເລື່ອງຂັນທີທັງຫລາຍຜູ້ຮັກສາວັນສະບາໂຕຂອງເຮົາ
ຜູ້ເລືອກເອົາແຕ່ສິ່ງທີ່ພໍໃຈເຮົາ ແລະຍຶດພັນທະສັນຍາຂອງເຮົາໄວ້ໝັ້ນຄົງ
5 ພາຍໃນວິຫານຂອງເຮົາ ແລະພາຍໃນກຳແພງຂອງເຮົາ ເຮົາຈະໃຫ້ອານຸສອນ
ແລະຊື່ສຽງແກ່ພວກເຂົາເຫລົ່ານັ້ນ ທີ່ດີກວ່າລູກຊາຍ ແລະລູກສາວ
ເຮົາຈະໃຫ້ຊື່ນິລັນດອນແກ່ພວກເຂົາທັງຫລາຍຊຶ່ງຈະບໍ່ຕັດອອກເລີຍ
6 ແລະບັນດາລູກຊາຍຂອງຄົນຕ່າງຊາດຜູ້ເຂົ້ານັບຖືພຣະຜູ້ເປັນເຈົ້າ
ບົວລະບັດພຣະອົງ ແລະຮັກພຣະນາມຂອງພຣະຜູ້ເປັນເຈົ້າ
ແລະເປັນຜູ້ຮັບໃຊ້ຂອງພຣະອົງ
ທຸກຄົນຜູ້ຖືຮັກສາວັນສະບາໂຕ ແລະບໍ່ໄດ້ລະເມີດ
ແລະຍຶດພັນທະສັນຍາຂອງເຮົາໄວ້ໃຫ້ໝັ້ນ
7 ຄົນເຫລົ່ານີ້ ເຮົາຈະນຳມາຍັງພູເຂົາບໍລິສຸດຂອງເຮົາ
ແລະເຮັດໃຫ້ພວກເຂົາຊື່ນບານຢູ່ໃນວິຫານຂອງການອະທິຖານຂອງເຮົາ
ເຄື່ອງເຜົາບູຊາຂອງພວກເຂົາ
ແລະເຄື່ອງຖວາຍຂອງພວກເຂົາ ຈະເປັນທີ່ພໍໃຈເທິງແທ່ນບູຊາຂອງເຮົາ
ເພາະວ່າວິຫານຂອງເຮົາ ພວກເຂົາຈະເອີ້ນວ່າ
ເປັນວິຫານຂອງການອະທິຖານ ສຳລັບບັນດາຊົນຊາດທັງຫລາຍ"
8 ອົງພຣະຜູ້ເປັນເຈົ້າພຣະເຈົ້າຜູ້ຮວບຮວມອິສຣາເອນທີ່ກະຈັດກະຈາຍ ບອກວ່າ
"ເຮົາຈະຮວບຮວມຄົນອື່ນມາໄວ້ກັບພວກເຂົາ
ນອກຈາກຄົນເຫລົ່ານັ້ນທີ່ໄດ້ຮວບຮວມໄວ້ແລ້ວ"
9 ເຈົ້າ ບັນດາສັດປ່າທົ່ງ ມາກິນ ທັງເຈົ້າບັນດາສັດໃນປ່າ
10 ຄົນຍາມຂອງພວກເຂົາຕາບອດ ພວກເຂົາທັງປວງບໍ່ມີຄວາມຮູ້
ພວກເຂົາທັງປວງເປັນໝາປາກກືກ ພວກເຂົາເຫົ່າບໍ່ໄດ້
ໄດ້ແຕ່ຫລັບຕາ ໄດ້ແຕ່ນອນ ມັກແຕ່ນອນຫລັບ
11 ພວກເຂົາເປັນໝາອຶດຫິວຊຶ່ງບໍ່ຮູ້ຈັກອີ່ມ ພວກເຂົາເປັນຜູ້ລ້ຽງແກະທີ່ເຂົ້າໃຈບໍ່ໄດ້
ພວກເຂົາທຸກຄົນກັບໄປຕາມທາງຕົນເອງ ຕ່າງກໍຫາກຳໄລໃສ່ຕົນເອງ ບໍ່ເວັ້ນຈັກຄົນ
12 ພວກເຂົາທັງຫລາຍກ່າວວ່າ "ມາແມ ໃຫ້ເຮົາເອົາເຫລົ້າອະງຸ່ນ
ໃຫ້ເຮົາດື່ມເຫລົ້າໃຫ້ເຕັມຕົວເຮົາ ແລະມື້ອື່ນນີ້ກໍຈະຄືມື້ນີ້ໃຫຍ່ໂຕເກີນຂະໜາດ"

# ບົດທີ 57

## "ບໍ່ມີສັນຕິສຸກແກ່ຄົນຊົ່ວ"

1 ຄົນຊອບທຳຈິບຫາຍ ແລະບໍ່ມີໃຜເອົາໃຈໃສ່ຕໍ່ຄົນທີ່ມີໃຈເມດຕາຖືກເອົາໄປ
ບໍ່ມີໃຜພິຈາລະນາວ່າຄົນຊອບທຳຖືກເອົາໄປເສຍຈາກຄວາມຊົ່ວຮ້າຍທີ່ຈະມາ
2 ພວກເຂົາຈະເຂົ້າໄປໃນສັນຕິພາບ

ຜູ້ດຳເນີນໃນຄວາມທ່ຽງທຳຂອງຕົນ ກໍຈະພັກຢູ່ບ່ອນນອນຂອງພວກເຂົາ
3 ແຕ່ເຈົ້າທັງຫລາຍ ບັນດາລູກຊາຍຂອງແມ່ມົດ
ເຊື້ອສາຍຂອງຄົນລ່ວງປະເວນີ ແລະຍິງໂສເພນີຈົ່ງເຂົ້າມາໃກ້ບ່ອນນີ້
4 ເຈົ້າທັງຫລາຍເວົ້າເຍາະເຍີ້ຍໃຜ ເຈົ້າອ້າປາກແລບລີ້ນຫລອກຜູ້ໃດ
ເຈົ້າເປັນລູກແຫ່ງການລະເມີດ ເປັນເຊື້ອສາຍແຫ່ງຄວາມຂີ້ຕົວະບໍ່ແມ່ນບໍ
5 ຄືເຈົ້າຜູ້ຮ້ອນດ້ວຍຮູບເຄົາລົບພາຍໃຕ້ຕົ້ນໄມ້ຂຽວທຸກຕົ້ນ
ຜູ້ຂ້າລູກຂອງເຈົ້າໃນຮ່ອມພູເຂົາກ້ອງໂງ່ນຫີນ
6 ສວນຂອງເຈົ້າຢູ່ທ່າມກາງຫີນກ້ຽງດີແຫ່ງແມ່ນ້ຳ ມັນເປັນສ່ວນຂອງເຈົ້າ
ເຈົ້າໄດ້ເທເຄື່ອງດື່ມບູຊາ ແລະຖວາຍເຄື່ອງບູຊາພືດຜົນເປັນເມັດໃຫ້ແກ່ມັນ
ເຮົາຈະຮັບການເລົ້າໂລມໃນເລື່ອງສິ່ງເຫລົ່ານີ້ບໍ
7 ເທິງພູເຂົາສູງເດັ່ນ ເຈົ້າໄດ້ຕັ້ງບ່ອນນອນຂອງເຈົ້າໄວ້
ແລະໃນທີ່ນັ້ນເຈົ້າໄປຖວາຍເຄື່ອງບູຊາ
8 ເຈົ້າໄດ້ຕັ້ງອານຸສອນຂອງເຈົ້າໄວ້ຫລັງປະຕູ ແລະເສົາປະຕູ
ເຈົ້າຈຶ່ງເປີດຜ້າປົກບ່ອນນອນຂອງເຈົ້າ ເຈົ້າຂຶ້ນໄປເທິງນັ້ນ ເຈົ້າເຮັດໃຫ້ມັນກວ້າງ
ແລະເຈົ້າຕົກລົງກັບມັນເພື່ອເຈົ້າເອງ ເຈົ້າຮັກບ່ອນນອນຂອງມັນ
ແລະເຈົ້າໄດ້ເບິ່ງການເປືອຍກາຍ
9 ເຈົ້າເດີນທາງໄປຫາກະສັດພ້ອມກັບນ້ຳມັນ ແລະທະວີນ້ຳຫອມຂອງເຈົ້າ
ເຈົ້າໄດ້ສົ່ງທູດຂອງເຈົ້າໄປໄກ ແມ່ນໃຫ້ລົງໄປຈົນເຖິງນາລົກ
10 ເຈົ້າອິດເມື່ອຍຍ້ອນໄລຍະທາງໄກຂອງເຈົ້າ ແຕ່ເຈົ້າບໍ່ໄດ້ເວົ້າວ່າ "ໝົດຫວັງ"
ເຈົ້າປະສົບຊີວິດແຫ່ງມືຂອງເຈົ້າ ແລະເຈົ້າຈຶ່ງບໍ່ໄດ້ສະຫລົດໃຈ
11 ເຈົ້າສັ່ນຢ້ານ ແລະຢ້ານໃຜ ເຈົ້າຈຶ່ງໄດ້ຕົວະຢູ່ ແລະບໍ່ນຶກເຖິງເຮົາ
ແລະບໍ່ເອົາໃຈໃສ່ຕໍ່ເຮົາຈັກໜ້ອຍ ເຮົາບໍ່ໄດ້ລະງັບປາກຢູ່ເປັນເວລາດົນແລ້ວບໍ
ແນວນັ້ນເຈົ້າຈຶ່ງບໍ່ຢຳເກງເຮົາ
12 ເຮົາຈະບອກເຖິງຄວາມຊອບທຳ ແລະການກະທຳຂອງເຈົ້າ
ແຕ່ມັນກໍຈະບໍ່ເປັນປະໂຫຍດແກ່ເຈົ້າ
13 ເມື່ອເຈົ້າຮ້ອງອອກມາກໍໃຫ້ສິ່ງທີ່ເຈົ້າສະສົມໄວ້ຊ່ວຍເຈົ້າໃຫ້ພົ້ນ
ແຕ່ລົມຈະພັດມັນໄປໝົດ ພຽງລົມຫາຍໃຈຈະຫອບມັນອອກໄປ
ແຕ່ຜູ້ທີ່ວາງໃຈໃນເຮົາຈະໄດ້ແຜ່ນດິນນັ້ນເປັນກຳມະສິດ
ແລະຈະໄດ້ພູເຂົາບໍລິສຸດຂອງເຮົາເປັນມໍລະດົກ
14 ແລະຈະມີສຽງວ່າ "ພູນດິນ ພູນດິນຂຶ້ນ ແລະຈົ່ງຕຽມທາງ
ຮື້ຖອນອຸປະສັກອອກຈາກທາງຂອງຊົນຊາດຂອງເຮົາ"
15 ອົງຜູ້ສູງເດັ່ນ ຄືຜູ້ທີ່ສະຖິດຢູ່ສືບໆໄປເປັນນິດ ຜູ້ມີພຣະນາມວ່າບໍລິສຸດ ບອກດັ່ງນີ້ວ່າ
"ເຮົາຢູ່ໃນບ່ອນທີ່ສູງແລະບໍລິສຸດ ແລະຢູ່ກັບຜູ້ທີ່ມີຈິດໃຈສຳນຶກຜິດ ແລະຖ່ອມຕົວ

ເພື່ອຈະຮື້ຟື້ນຈິດໃຈຂອງຜູ້ຖ່ອມໃຈ ແລະຟື້ນໃຈຂອງຜູ້ສຳນຶກຜິດ
16 ເພາະວ່າເຮົາຈະບໍ່ຕໍ່ສູ້ຢູ່ເປັນນິດ ຫລືຄຽດຢູ່ສະເໝີ
ເພາະຈິດວິນຍານຈະອ່ອນລົງຕໍ່ໜ້າເຮົາ ຄືບັນດາຈິດວິນຍານທີ່ເຮົາໄດ້ສ້າງແລ້ວ
17 ເຮົາຄຽດຍ້ອນຄວາມຊົ່ວຊ້າແຫ່ງຄວາມໂລບຂອງລາວ ເຮົາຕີລາວ ເຮົາເຊື່ອງຕົວ
ແລະຄຽດ ແຕ່ລາວຍັງຫັນກັບໄປດຳເນີນຕາມໃຈຂອງລາວຢູ່
18 ເຮົາໄດ້ເຫັນວິທີການຂອງລາວແລ້ວ ແຕ່ເຮົາຈະປິ່ນປົວລາວໃຫ້ຫາຍ
ເຮົາຈະນຳລາວ ແລະຕອບສະໜອງ
ລາວກັບຜູ້ໄວ້ທຸກໃຫ້ລາວດ້ວຍການເລົ້າໂລມ”
19 ພຣະຜູ້ເປັນເຈົ້າບອກວ່າ
“ເຮົາສ້າງຜົນຂອງຮີມຝີປາກ ແຫ່ງສັນຕິພາບ ສັນຕິພາບແກ່ຄົນໄກ
ແລະຄົນໃກ້ ແລະເຮົາຈະປິ່ນປົວພວກເຂົາໃຫ້ຫາຍ”
20 ແຕ່ຄົນຊົ່ວນັ້ນຄືທະເລທີ່ປັ່ນປ່ວນ ເພາະວ່າມັນມິດຢູ່ບໍ່ໄດ້
ແລະນ້ຳຂອງມັນກໍກວນຕົມ ແລະຄວາມເປື້ອນຂຶ້ນມາ
21 ພຣະເຈົ້າຂອງຂ້າພະເຈົ້າບອກວ່າ “ບໍ່ມີສັນຕິສຸກແກ່ຄົນຊົ່ວ”

# ບົດທີ 58

## ການອົດອາຫານທີ່ພໍພຣະໄທພຣະເຈົ້າ

1 “ຈົ່ງຮ້ອງດັງໆ ຢ່າອົດໄວ້ ຈົ່ງເປັ່ງສຽງຂອງເຈົ້າຄືເປົ່າເຂົາສັດ
ຈົ່ງແຈ້ງແກ່ຊົນຊາດຂອງເຮົາໃຫ້ຮູ້ເຖິງເລື່ອງການລະເມີດຂອງພວກເຂົາ
ແກ່ວົງວານຂອງຢາໂຄບ ເລື່ອງບາບຂອງພວກເຂົາ
2 ແຕ່ພວກເຂົາຍັງສະແຫວງຫາເຮົາທຸກມື້ ແລະປິຕິຍິນດີທີ່ຈະຮູ້ຈັກທາງຂອງເຮົາ
ຄືກັນກັບວ່າພວກເຂົາເປັນປະຊາຊາດທີ່ໄດ້ເຮັດຄວາມຊອບທຳ
ແລະບໍ່ໄດ້ປະຖິ້ມກົດແຫ່ງພຣະເຈົ້າຂອງຕົນ
ພວກເຂົາກໍຂໍຂໍ້ກົດໝາຍອັນທ່ຽງທຳຈາກເຮົາ
ພວກເຂົາທັງຫລາຍກໍປິຕິຍິນດີທີ່ຈະເຂົ້າມາໃກ້ພຣະເຈົ້າ
3 ພວກເຂົາກ່າວວ່າ ‘ເປັນຫຍັງຂ້າພະອົງທັງຫລາຍໄດ້ອົດອາຫານ
ແລະພຣະອົງບໍ່ໄດ້ທອດພຣະເນດ
ເປັນຫຍັງຂ້າພະອົງທັງຫລາຍໄດ້ຖ່ອມຕົວລົງ
ແລະພຣະອົງບໍ່ໄດ້ສົນພຣະໄທ’
ເບິ່ງແມ ໃນມື້ທີ່ເຈົ້າອົດອາຫານເຈົ້າເຮັດຕາມໃຈຂອງເຈົ້າ
ແລະບີບບັງຄັບຄົນງານຂອງເຈົ້າທັງໝົດ
4 ເບິ່ງແມ ເຈົ້າອົດອາຫານພຽງເພື່ອການຜິດຖຽງ ແລະຕໍ່ສູ້
ແລະເພື່ອທຳຮ້າຍກັນແລະກັນ

ການອົດອາຫານຂອງເຈົ້າໃນມື້ນີ້ຈະບໍ່ເຮັດໃຫ້ສຽງຂອງເຈົ້າໄດ້ຍິນໄປເຖິງບ່ອນສູງ
5 ແບບນີ້ບໍ ເປັນການອົດອາຫານທີ່ເຮົາເລືອກ ຄືວັນທີ່ຄົນຂົ່ມຕົວ
ການກົ້ມຫົວຂອງຕົນລົງຄືແອນ້ອຍ ປູຜ້າກະສອບ
ແລະຂີ້ເຖົ່າຮອງກ້ອງຕົນ ແບບນີ້ບໍ ເຈົ້າຈະເອີ້ນວ່າເປັນການອົດອາຫານ
ແລະເປັນມື້ທີ່ພຣະຜູ້ເປັນເຈົ້າຊົງພໍພຣະໄທ
6 ການອົດອາຫານຢ່າງນີ້ບໍ່ແມ່ນບໍ ທີ່ເຮົາຕ້ອງການ ຄືການແກ້ໂສ້ຂອງຄວາມຊົ່ວ
ການປົດພາລະໜັກ ແລະການປ່ອຍໃຫ້ຜູ້ຖືກບີບບັງຄັບເປັນອິດສະຫລະ
ແລະການຫັກແອກທຸກອັນ
7 ແຕ່ແມ່ນການແບ່ງປັນອາຫານຂອງເຈົ້າໃຫ້ກັບຜູ້ອຶດຫິວ
ແລະນຳຄົນທຸກຍາກ ບໍ່ມີບ້ານ ເຂົ້າມາໃນບ້ານຂອງເຈົ້າ
ເມື່ອເຈົ້າເຫັນຄົນເປືອຍກາຍກໍປົກກາຍເຂົາໄວ້
ແລະບໍ່ເຊື່ອງຕົວຂອງເຈົ້າຈາກຍາດພີ່ນ້ອງຂອງເຈົ້າເອງ
8 ແລ້ວຄວາມສະຫວ່າງຂອງເຈົ້າຈະພຸ່ງອອກມາເໝືອນດັ່ງຮຸ່ງອາລຸນ
ແລະບາດແຜຂອງເຈົ້າຈະເອີ່ນຊື່ນຂຶ້ນມາຢ່າງວ່ອງໄວ
ຄວາມຊອບທຳຂອງເຈົ້າຈະຍ່າງນຳໜ້າເຈົ້າ
ແລະສະຫງ່າລາສີຂອງພຣະຜູ້ເປັນເຈົ້າຈະລະວັງຫລັງເຈົ້າໄວ້
9 ແລ້ວເຈົ້າຈະທູນຕອບ ແລະພຣະຜູ້ເປັນເຈົ້າຈະຕອບ ເຈົ້າຈະຮ້ອງທູນຕອບ
ແລະພຣະອົງຈະບອກວ່າ ‘ເຮົາຢູ່ນີ້’ ຖ້າເຈົ້າຈະເອົາອອກໄປຈາກທ່າມກາງເຈົ້າ
ຊຶ່ງແອກ ການຊີ້ໜ້າ ແລະການເວົ້າຢ່າງບໍ່ມີປະໂຫຍດ
10 ຖ້າເຈົ້າທຸ້ມເທຊີວິດຂອງເຈົ້າແກ່ຄົນຫິວ ແລະໃຫ້ຜູ້ຖືກທຸກໃຈໄດ້ອີ່ມໃຈ
ແລ້ວຄວາມສະຫວ່າງຂອງເຈົ້າຈະພຸ່ງຂຶ້ນໃນຄວາມມືດ
ແລະຄວາມມືດຂອງເຈົ້າຈະເປັນຄືກັບຕອນກາງເວັນ
11 ແລະພຣະຜູ້ເປັນເຈົ້າຈະນຳເຈົ້າຢູ່ເປັນນິດ ແລະໃຫ້ຈິດໃຈເຈົ້າອີ່ມໃນລະດູແລ້ງ
ແລະເຮັດໃຫ້ກະດູກຂອງເຈົ້າອ້ວນພີ ແລະເຈົ້າຈະເປັນຄືກັບສວນທີ່ມີນ້ຳຫົດ
ຄືນ້ຳພຸ ສະນ້ຳຂອງມັນບໍ່ຂາດ
12 ແລະພວກເຈົ້າຈະໄດ້ສ້າງສິ່ງທີ່ເພພັງບູຮານຂຶ້ນໃໝ່
ເຈົ້າຈະໄດ້ກໍ່ສ້າງຮາກຖານຂອງຄົນຫລາຍຊົ່ວອາຍຸມາແລ້ວຂຶ້ນ
ເຈົ້າຈະໄດ້ຊື່ວ່າ ‘ເປັນຜູ້ກໍ່ສ້າງກຳແພງທີ່ເພພັງ
ຜູ້ສ້ອມແປງຖະໜົນໃຫ້ດີຄືເກົ່າເພື່ອຈະໄດ້ອາໄສຢູ່’

## ການຖືຮັກສາວັນສະບາໂຕ

13 ຖ້າເຈົ້າຢຸດລະເມີດວັນສະບາໂຕ
ຄືຈາກການເຮັດຕາມໃຈຂອງເຈົ້າໃນມື້ບໍລິສຸດຂອງເຮົາ
ແລະເອີ້ນສະບາໂຕວ່າ ມື້ປີຕິຍິນດີ ແລະເອີ້ນມື້ບໍລິສຸດຂອງພຣະຜູ້ເປັນເຈົ້າວ່າ

ມື້ມີກຽດ
ຖ້າເຈົ້າໃຫ້ກຽດມັນ ບໍ່ໄປຕາມທາງຂອງເຈົ້າເອງ
ຫລືເຮັດຕາມໃຈຂອງເຈົ້າ ຫລືເວົ້າຖ້ອຍຄຳຂອງເຈົ້າເອງ
14 ແລ້ວເຈົ້າຈະໄດ້ຄວາມປີຕິຍິນດີໃນ ພຣະຜູ້ເປັນເຈົ້າ
ແລະເຮົາຈະໃຫ້ເຈົ້າຂີ່ມຂີ່ຢູ່ເທິງບ່ອນສູງຂອງແຜ່ນດິນໂລກ
ແລະເຮົາຈະລ້ຽງເຈົ້າດ້ວຍມໍລະດົກຂອງຢາໂຄບພໍ່ຂອງເຈົ້າ
ເພາະວ່າພຣະໂອດຂອງ ພຣະຜູ້ເປັນເຈົ້າ ໄດ້ບອກແລ້ວ"

# ບົດທີ 59

## ພຣະເຈົ້າສາມາດ ຍິນດີ ແລະມີລິດທີ່ຈະຊ່ວຍໃຫ້ລອດພົ້ນ

1 ເບິ່ງແມ ພຣະຫັດຂອງ ພຣະຜູ້ເປັນເຈົ້າບໍ່ໄດ້ສັ້ນລົງ ທີ່ຈະຊ່ວຍໃຫ້ລອດພົ້ນບໍ່ໄດ້
ຫລືພຣະກັນບໍ່ໄດ້ໜັກ ຊຶ່ງຈະບໍ່ໄດ້ຍິນ
2 ແຕ່ວ່າຄວາມຊົ່ວຊ້າຂອງເຈົ້າທັງຫລາຍໄດ້
ເຮັດໃຫ້ເກີດການແຍກລະຫວ່າງເຈົ້າກັບ ພຣະເຈົ້າ ຂອງເຈົ້າ
ແລະບາບຂອງເຈົ້າທັງຫລາຍໄດ້ບັງພຣະພັກຂອງພຣະອົງ
ອອກຈາກເຈົ້າ ພຣະອົງຈຶ່ງບໍ່ໄດ້ຍິນ
3 ເພາະວ່າມືຂອງເຈົ້າມີມົນທິນດ້ວຍເລືອດ ແລະນິ້ວມືຂອງເຈົ້າດ້ວຍຄວາມຊົ່ວຊ້າ
ຮີມຝີປາກຂອງເຈົ້າໄດ້ເວົ້າຄຳຕົວະ ລີ້ນຂອງເຈົ້າເວົ້າຄວາມອະທຳ
4 ບໍ່ມີຜູ້ໃດຟ້ອງຢ່າງຍຸດຕິທຳ ບໍ່ມີຜູ້ໃດຂຶ້ນສານຢ່າງສັດຈິງ
ພວກເຂົາທັງຫລາຍວາງໃຈຢູ່ກັບສິ່ງທີ່ບໍ່ເປັນສາລະ ພວກເຂົາເວົ້າຕົວະ
ພວກເຂົາຖືພາຄວາມຊົ່ວ ແລະເກີດຄວາມຊົ່ວຊ້າອອກມາ
5 ພວກເຂົາຟັກໄຂ່ງູທັບທາງ ພວກເຂົາສານໃຍແມງມຸມ ພວກເຂົາຜູ້ກິນໄຂ່ນັ້ນກໍຕາຍ
ແມ່ນໄຂ່ໜ່ວຍໃດຖືກທຸບ ງູຮ້າຍກໍເປັນໂຕຂຶ້ນມາ
6 ໃຍຂອງມັນຈະໃຊ້ເປັນເສື້ອຜ້າບໍ່ໄດ້ ຄົນຈະເອົາສິ່ງທີ່ມັນເຮັດມາປົກຕົວບໍ່ໄດ້
ກິດຈະການຂອງມັນເປັນການຊົ່ວຊ້າ ແລະການກະທຳອັນທາລຸນກໍຢູ່ໃນມືຂອງມັນ
7 ຕີນຂອງມັນແລ່ນໄປຫາຄວາມຊົ່ວ
ແລະມັນເລັ່ງໄປຫລັ່ງເລືອດບໍ່ມີຄວາມຜິດໃຫ້ເຖິງຕາຍ
ຄວາມຄິດຂອງມັນເປັນຄວາມຄິດຊົ່ວຊ້າ ການລ້າງຜານ
ແລະການທຳລາຍຢູ່ໃນທົນທາງຂອງມັນ
8 ມັນບໍ່ຮູ້ຈັກທາງແຫ່ງສັນຕິສຸກ ບໍ່ມີຄວາມຍຸດຕິທຳໃນວິຖີຂອງມັນ
ມັນໄດ້ເຮັດໃຫ້ຖະໜົນຂອງຕົນຄົດໂຄ້ງ ຜູ້ໃດທີ່ເດີນໃນທາງນັ້ນຈະບໍ່ຮູ້ຈັກສັນຕິສຸກ
9 ເຫດສັນນັ້ນ ຄວາມຍຸດຕິທຳຈຶ່ງຢູ່ຫ່າງຈາກເຮົາທັງຫລາຍ
ແລະຄວາມທ່ຽງທຳຕາມເຮົາບໍ່ທັນ ເຮົາທັງຫລາຍຄອຍຖ້າຄວາມສະຫວ່າງ

ແລະເບິ່ງແມ ຄວາມມືດ ຄອຍຖ້າຄວາມສຸກໃສ ແຕ່ເຮົາດໍາເນີນໃນຄວາມມືດ
10 ເຮົາທັງຫລາຍຄໍາຫາກໍາແພງຄືຄົນຕາບອດ ເຮົາຄໍາຫາຄືຄົນບໍ່ມີໜ່ວຍຕາ
ເຮົາສະດຸດໃນເວລາທ່ຽງ ຄື ໃນເວລາກາງຄືນ ເຮົາຢູ່ໃນບ່ອນທີ່ເພພັງຄືຄົນຕາຍ
11 ເຮົາທຸກຄົນຄາງຄືໝີ ແລະຮ້ອງຄືນົກເຂົາ ແລະຊອກຫາຄວາມຍຸດຕິທໍາ
ແຕ່ບໍ່ມີເລີຍ ຫາຄວາມພົ້ນ ແຕ່ກໍຢູ່ໄກຈາກເຮົາ
12 ເພາະວ່າການລະເມີດຂອງຂ້າພະອົງທັງຫລາຍທະວີຂຶ້ນຕໍ່ພຣະພັກພຣະອົງ
ແລະບາບຂອງຂ້າພະອົງກໍຟ້ອງຂ້າພະອົງ
ເພາະວ່າການລະເມີດຂອງຂ້າພະອົງຢູ່ກັບຂ້າພະອົງ
ສ່ວນຄວາມຊົ່ວຊ້າຂອງຂ້າພະອົງ ຂ້າພະອົງກໍຮູ້ຈັກ
13 ຄືການລະເມີດ ການປະຕິເສດພຣະຜູ້ເປັນເຈົ້າ
ການຫັນໄປຈາກການຕິດຕາມພຣະເຈົ້າຂອງເຮົາ
ການເວົ້າທີ່ເປັນການບີບບັງຄັບ ແລະການກະບົດ ການກໍ່
ແລະການກ່າວຄໍາຕົວະຈາກໃຈ
14 ຄວາມຍຸດຕິທໍາກໍຫັນກັບ ແລະຄວາມທ່ຽງທໍາກໍຢືນຢູ່ແຕ່ໄກ
ເພາະວ່າຄວາມຈິງລົ້ມລົງແລ້ວຕາມຖະໜົນ ແລະຄວາມທ່ຽງຕົງເຂົ້າໄປບໍ່ໄດ້
15 ຄວາມຈິງບໍ່ມີຢູ່ ແລະຜູ້ໃດທີ່ໜີຈາກຄວາມຊົ່ວກໍເຮັດຕົວໃຫ້ເປັນເຫຍື່ອ
ພຣະຜູ້ເປັນເຈົ້າເຫັນ ແລ້ວບໍ່ເປັນທີ່ພໍພຣະໄທພຣະອົງທີ່ບໍ່ມີຄວາມຍຸດຕິທໍາ
16 ພຣະອົງເຫັນວ່າບໍ່ມີຄົນໃດເລີຍ ຊົງປະຫລາດພຣະໄທທີ່ບໍ່ມີໃຜອ້ອນວອນເພື່ອ
ເຫດສັນນັ້ນ ພຣະກອນຂອງພຣະອົງເອງກໍນໍາຄວາມພົ້ນມາສູ່ພຣະອົງ
ແລະຄວາມຊອບທໍາຂອງພຣະອົງຍົກພຣະອົງໄວ້
17 ພຣະອົງສວມຄວາມຊອບທໍາເປັນເຄື່ອງເກາະ
ແລະໝວກແຫ່ງຄວາມພົ້ນຢູ່ເໜືອພຣະສຽນຂອງພຣະອົງ
ພຣະອົງນຸ່ງເສື້ອຜ້າແຫ່ງການແກ້ແຄ້ນປົກພຣະກາຍ
ແລະເອົາຄວາມກະຕືລືລົ້ນຫົ່ມພຣະອົງ
18 ພຣະອົງຈະຊໍາລະໃຫ້ຕາມການກະທໍາຂອງລາວ ຄືພຣະພິໂລດແກ່ສັດຕູຂອງພຣະອົງ
ແລະສິ່ງຕອບແທນແກ່ສັດຕູຂອງພຣະອົງ
ພຣະອົງຈະມອບການຕອບແທນແກ່ເກາະທັງຫລາຍ
19 ພວກເຂົາຈຶ່ງຈະຢໍາເກງພຣະນາມພຣະຜູ້ເປັນເຈົ້າຈາກຕາເວັນຕົກ
ແລະສະຫງ່າລາສີຂອງພຣະອົງຈາກບ່ອນຕາເວັນຂຶ້ນ ເມື່ອສັດຕູມາຄືແມ່ນໍ້າແຮງ
ພຣະວິນຍານຂອງພຣະຜູ້ເປັນເຈົ້າຈະຍົກທຸງຂຶ້ນຕໍ່ສູ້ມັນ

## ພຣະຜູ້ໄຖ່ຈະສະເດັດມາໃນເມືອງຊີໂອນ

20 ພຣະຜູ້ເປັນເຈົ້າບອກວ່າ “ແລະພຣະຜູ້ໄຖ່ຈະສະເດັດມາໃນເມືອງຊີໂອນ
ມາຍັງບັນດາຜູ້ຢູ່ໃນຢາໂຄບຜູ້ຫັນຈາກການລະເມີດ”

[21]ພຣະຜູ້ເປັນເຈົ້າບອກວ່າ "ແລະຝ່າຍເຮົານີ້ເປັນພັນທະສັນຍາຂອງເຮົາກັບພວກເຂົາທັງ-
ຫລາຍ ຄືວິນຍານຂອງເຮົາຊຶ່ງຢູ່ເໜືອເຈົ້າ ແລະຄຳຂອງເຮົາຊຶ່ງເຮົາໃສ່ໄວ້ໃນປາກຂອງເຈົ້າ ຈະ
ບໍ່ໜີໄປຈາກປາກຂອງເຈົ້າ ຫລືຈາກປາກເຊື້ອສາຍຂອງເຈົ້າ ຫລືຈາກປາກຂອງເຊື້ອສາຍແຫ່ງ
ເຊື້ອສາຍຂອງເຈົ້າ ຕັ້ງແຕ່ເວລານີ້ຕະຫລອດໄປເປັນນິດ" ພຣະຜູ້ເປັນເຈົ້າບອກດັ່ງນີ້

# ບົດທີ 60

## ສະຫງ່າລາສີຂອງເຢຣູຊາເລັມໃນອະນາຄົດ

1 ເຢຣູຊາເລັມ ເອີຍ! ຈົ່ງລຸກຂຶ້ນສ່ອງແສງເໝືອນຕາເວັນ
ສະຫງ່າລາສີຂອງ ພຣະຜູ້ເປັນເຈົ້າ ຈະສ່ອງແສງໃນເຈົ້າ.
2 ຄວາມມືດຈະປົກຄຸມຊົນຊາດອື່ນ
ແຕ່ແສງສະຫວ່າງຂອງ ພຣະຜູ້ເປັນເຈົ້າ ຈະສ່ອງແສງໃນເຈົ້າ
ສະຫງ່າລາສີຂອງ ພຣະຜູ້ເປັນເຈົ້າ ຈະຢູ່ນຳເຈົ້າ.
3 ຊົນຊາດທັງຫລາຍຈະຖືກນຳມາຍັງແສງສະຫວ່າງຂອງເຈົ້າ
ແລະກະສັດທັງຫລາຍຈະຖືກນຳມາຍັງຄວາມແຈ້ງໃນມື້ໃໝ່ຂອງເຈົ້າ.
4 ຈົ່ງເບິ່ງຮອບຕົວເຈົ້າ ແລະເບິ່ງສິ່ງທີ່ຈະເກີດຂຶ້ນ
ປະຊາຊົນຂອງເຮົາຈະໂຮມກັນມາຍັງບ້ານ
ລູກຊາຍທັງຫລາຍຂອງເຈົ້າຈະມາຈາກທາງໄກ
ລູກສາວທັງຫລາຍຂອງເຈົ້າຈະຖືກອູ້ມມາເໝືອນເດັກນ້ອຍ.
5 ເຈົ້າຈະເຫັນສິ່ງນີ້ ແລະມີຄວາມສຸກໃຈ
ໃຈຂອງເຈົ້າຈະສັ່ນດ້ວຍຄວາມຕື່ນເຕັ້ນ
ຊັບສົມບັດຂອງຊາດທັງຫລາຍຈະຖືກນຳມາໃຫ້ເຈົ້າ
ຊັບທັງຫລາຍຈາກທະເລຟາກນັ້ນຈະມາຍັງເຈົ້າ.
6 ບັນດາຂະບວນອູດຈະມາຈາກ ມີດີອານ ແລະ ເອຟາ
ມັນຈະບັນທຸກຄຳ ແລະເຄື່ອງຫອມມາຈາກ ເຊບາ
ປະຊາຊົນທັງຫລາຍຈະບອກຂ່າວດີກ່ຽວກັບກິດຈະການຂອງ ພຣະເຈົ້າ.
7 ຝູງແກະທັງໝົດຈາກ ເກດາ ແລະຈາກ ເນບາໂຢດ ຈະມາຫາເຈົ້າ
ເພື່ອເປັນເຄື່ອງບູຊາ
ແລະຈະຖືກຖວາຍໄວ້ເທິງແທ່ນ ເພື່ອໃຫ້ພຣະຜູ້ເປັນເຈົ້າຊົງພໍພຣະໄທ
ພຣະຜູ້ເປັນເຈົ້າ ຈະເຮັດໃຫ້ພຣະວິຫານຂອງພຣະອົງ
ຈະເລີນຮຸ່ງເຮືອງກວ່າແຕ່ກ່ອນ.
8 ສິ່ງເຫລົ່ານີ້ແມ່ນຫຍັງຈຶ່ງບິນມາເໝືອນເມກ
ເໝືອນນົກກາງແກກັບຄືນຮັງຂອງມັນ.
9 ພວກມັນເປັນເຮືອທີ່ມາຈາກແດນໄກ

ມັນຂົນເອົາໄພ່ພົນຂອງ ພຣະເຈົ້າ ໄປຍັງບ້ານ
ພ້ອມດ້ວຍເງິນຄຳເພື່ອເປັນພຣະກຽດແດ່ພຣະນາມຂອງ ພຣະຜູ້ເປັນເຈົ້າ
ຫລື ພຣະເຈົ້າ ອົງບໍລິສຸດຂອງ ອິສຣາເອນ
ຜູ້ຊົງເຮັດໃຫ້ໄພ່ພົນຂອງພຣະອົງຈະເລີນຮຸ່ງເຮືອງ.
10 ພຣະຜູ້ເປັນເຈົ້າ ຊົງກ່າວຕໍ່ຊາວ ເຢຣູຊາເລັມ ວ່າ,
“ຄົນຕ່າງດ້າວຈະສ້າງກຳແພງຂອງເຈົ້າຂຶ້ນ
ກະສັດຂອງພວກເຂົາຈະຮັບໃຊ້ເຈົ້າ
ເຮົາໄດ້ລົງໂທດເຈົ້າດ້ວຍຄວາມໂກດຮ້າຍຂອງເຮົາ
ແຕ່ເຮົາຈະສຳແດງຄວາມເມດຕາປານີຕໍ່ເຈົ້າ.
11 ປະຕູເມືອງຂອງເຈົ້າຈະໄຂໄວ້ທັງກາງເວັນ ແລະກາງຄືນ
ເພື່ອກະສັດຂອງຊົນຊາດທັງຫລາຍຈະນຳຊັບສົມບັດມາໃຫ້ເຈົ້າ.
12 ແຕ່ບັນດາຊົນຊາດທີ່ບໍ່ຮັບໃຊ້ເຈົ້າຈະຈິບຫາຍໄປໝົດ.
13 ເຢຣູຊາເລັມ ເອີຍ! ເຈົ້າຈະຖືກສ້າງຂຶ້ນດ້ວຍໄມ້ສັກຢ່າງດີທີ່ສຸດ
ຈາກປ່າ ເລບານອນ
ເພື່ອສ້າງວິຫານຂອງເຮົາຂຶ້ນໃໝ່ໃຫ້ມີຄວາມງົດງາມ
ແລະເພື່ອໃຫ້ນະຄອນຂອງເຮົາມີສະຫງ່າລາສີ.
14 ພວກລູກຊາຍຂອງຜູ້ທີ່ກົດຂີ່ເຈົ້າຈະມາ
ພວກເຂົາຈະກົ້ມລົງສະແດງຄວາມເຄົາລົບເຈົ້າ
ຄົນທັງຫລາຍທີ່ຄັ້ງໜຶ່ງເຄີຍໝິ່ນປະໝາດເຈົ້າ
ຈະຂາບລົງທີ່ຕີນຂອງເຈົ້າ
ພວກເຂົາຈະເອີ້ນເຈົ້າວ່າ, “ພຣະນະຄອນຂອງ ພຣະຜູ້ເປັນເຈົ້າ”
ວ່າ, “ຊີໂອນ ນະຄອນແຫ່ງ ພຣະເຈົ້າ ອົງບໍລິສຸດຂອງ ອິສຣາເອນ.”
15 ເຈົ້າຈະບໍ່ຖືກປະຖິ້ມ ແລະເປັນທີ່ກຽດຊັງອີກຕໍ່ໄປ
ບໍ່ເປັນນະຄອນຮ້າງເປົ່າ ແລະເສົ້າໝອງ
ເຮົາຈະເຮັດໃຫ້ເຈົ້າຍິ່ງໃຫຍ່ ແລະສວຍງາມ
ເປັນສະຖານທີ່ມ່ວນຊື່ນຕະຫລອດໄປ.
16 ບັນດາຊົນຊາດ ແລະກະສັດທັງຫລາຍຈະລ້ຽງດູເຈົ້າ
ຈະເປັນເໝືອນແມ່ລ້ຽງລູກ
ເຈົ້າຈະຮູ້ວ່າເຮົາ ພຣະຜູ້ເປັນເຈົ້າ ໄດ້ຊ່ອຍໄຖ່ເຈົ້າໃຫ້ພົ້ນໄພ
ແລະຮູ້ວ່າ ພຣະເຈົ້າ ອົງຍິ່ງໃຫຍ່ຂອງ ອິສຣາເອນ ໄດ້ຊ່ອຍເຈົ້າເປັນອິດສະຫລະ.
17 ເຮົາຈະນຳຄຳມາແທນທອງສຳລິດໃຫ້ເຈົ້າ
ນຳເງິນມາແທນເຫລັກ ເຫລັກມາແທນຫີນ ແລະນຳທອງສຳລິດມາແທນໄມ້
ພວກເຂົາປົກຄອງເຈົ້າ ຈະບໍ່ກົດຂີ່ອີກຕໍ່ໄປ

ເຮົາຈະເຮັດໃຫ້ພວກເຂົາປົກຄອງຢ່າງຍຸດຕິທຳ ແລະມີສັນຕິສຸກ.
18 ສຽງຂອງຄວາມໂຫດຮ້າຍຈະບໍ່ໄດ້ຍິນຕໍ່ໄປ
ປະເທດຂອງເຈົ້າຈະບໍ່ຖືກທຳລາຍອີກຕໍ່ໄປ
ເຮົາຈະເປັນເໝືອນກຳແພງຄຸ້ມຄອງປ້ອງກັນເຈົ້າ
ເຈົ້າຈະສັນລະເສີນເຮົາຍ້ອນວ່າເຮົາໄດ້ຊ່ອຍເຈົ້າໃຫ້ພົ້ນໄພ.
19 ດວງຕາເວັນຈະບໍ່ເປັນຄວາມສະຫວ່າງຂອງເຈົ້າໃນກາງເວັນອີກ
ຫລືດວງເດືອນຈະບໍ່ເປັນຄວາມສະຫວ່າງຂອງເຈົ້າໃນກາງຄືນອີກ
ແຕ່ເຮົາພຣະຜູ້ເປັນເຈົ້າຈະເປັນຄວາມສະຫວ່າງຂອງເຈົ້າ
ຕະຫລອດໄປເປັນນິດ
ສະຫງ່າລາສີຂອງເຮົາຈະເປັນຄວາມສະຫວ່າງສ່ອງແສງເທິງເຈົ້າ.
20 ວັນໂສກເສົ້າທັງຫລາຍຂອງເຈົ້າຈະສິ້ນສຸດລົງ
ເຮົາຄືພຣະຜູ້ເປັນເຈົ້າຈະເປັນຄວາມສະຫວ່າງຂອງເຈົ້າຕະຫລອດໄປເປັນນິດ
ເປັນຄວາມສະຫວ່າງທີ່ຖາວອນກວ່າຕາເວັນ ແລະດວງເດືອນ.
21 ປະຊາຊົນຂອງເຈົ້າຈະເຮັດແຕ່ສິ່ງທີ່ຖືກຕ້ອງ
ແລະຈະໄດ້ເປັນເຈົ້າຂອງແຜ່ນດິນຕະຫລອດໄປເປັນນິດ
ເຮົາໄດ້ປູກ ແລະສ້າງມັນ
ເພື່ອສະແດງຄວາມຍິ່ງໃຫຍ່ຂອງເຮົາໃຫ້ຄົນທັງປວງຮູ້.
22 ເຖິງແມ່ນຄອບຄົວຂອງເຈົ້ານ້ອຍ ແລະຕໍ່າຕ້ອຍທີ່ສຸດ
ກໍຈະເປັນຊາດໃຫຍ່ເໝືອນຊາດມະຫາອຳນາດ
ເມື່ອເຖິງວັນເວລາອັນເໝາະສົມ
ເຮົາຈະເຮັດໃຫ້ເຫດການນີ້ເກີດຂຶ້ນໂດຍໄວ
ເຮົາຄືພຣະຜູ້ເປັນເຈົ້າ!”

# ບົດທີ 61

## ຂ່າວປະເສີດເລື່ອງຄວາມພົ້ນໃນເມືອງຊີໂອນ

1 “ພຣະວິນຍານແຫ່ງອົງພຣະຜູ້ເປັນເຈົ້າພຣະເຈົ້າສະຖິດຢູ່ເທິງຂ້າພະເຈົ້າ
ເພາະວ່າພຣະຜູ້ເປັນເຈົ້າໄດ້ແຕ່ງຕັ້ງຂ້າພະເຈົ້າໄວ້
ໃຫ້ປະກາດຂ່າວປະເສີດແກ່ຄົນຍາກຈົນ
ພຣະອົງໄດ້ໃຊ້ຂ້າພະເຈົ້າປະກາດອິດສະຫລະພາບແກ່ບັນດາຊະເລີຍ
ໃຫ້ປະກາດແກ່ຄົນຕາບອດວ່າຈະໄດ້ເຫັນຮຸ່ງອີກ
ໃຫ້ປ່ອຍຜູ້ຖືກບີບບັງຄັບເປັນອິດສະຫລະ
2 ເພື່ອປະກາດປີແຫ່ງການຊົງໂຜດຂອງພຣະຜູ້ເປັນເຈົ້າ
ແລະມື້ແຫ່ງການແກ້ແຄ້ນຂອງພຣະເຈົ້າຂອງເຮົາ

ເພື່ອເລົ້າໂລມບັນດາຜູ້ທີ່ໄວ້ທຸກ

## ອິສຣາເອນຈະໄດ້ກັບຄືນມາໃໝ່

3 ເພື່ອຈັດໃຫ້ບັນດາຜູ້ທີ່ໄວ້ທຸກໃນເມືອງຊີໂອນ
ເພື່ອປະທານຄວາມສວຍງາມແທນຂີ້ເທົ່າໃຫ້ພວກເຂົາ
ນໍ້າມັນແຫ່ງຄວາມຍິນດີແທນການໄວ້ທຸກ
ຜ້າຫົ່ມແຫ່ງການສັນລະເສີນແທນຈິດໃຈທີ່ທໍ້ຖອຍ
ເພື່ອຄົນຈະເອີ້ນພວກເຂົາວ່າຕົ້ນໄມ້ແຫ່ງຄວາມຊອບທຳ
ບ່ອນຊຶ່ງພຣະຜູ້ເປັນເຈົ້າປູກໄວ້ ເພື່ອພຣະອົງຈະໄດ້ຮັບສະຫງ່າລາສີ
4 ພວກເຂົາທັງຫລາຍຈະສ້າງສິ່ງທີ່ເພພັງຂຶ້ນໃໝ່
ພວກເຂົາຈະກໍ່ສ້າງບ່ອນທີ່ຮ້າງເປົ່າແຕ່ເກົ່າກ່ອນຂຶ້ນໃໝ່
ພວກເຂົາຈະແປງຫົວເມືອງທີ່ເພພັງ
ຄືບ່ອນທີ່ຮ້າງເປົ່າມາຫລາຍຊົ່ວອາຍຸຄົນແລ້ວນັ້ນ
5 ຄົນຕ່າງຖິ່ນຈະຢືນລ້ຽງຝູງແບ້ແກະຂອງເຈົ້າທັງຫລາຍ
ລູກຊາຍທັງຫລາຍຂອງຄົນຕ່າງດ້າວຈະເປັນຄົນໄຖນາ
ແລະຄົນແຕ່ງເຄືອອະງຸ່ນຂອງເຈົ້າ
6 ແຕ່ເຈົ້າທັງຫລາຍຈະໄດ້ຊື່ວ່າ ປະໂລຫິດຂອງພຣະຜູ້ເປັນເຈົ້າ
ຄົນຈະເອີ້ນເຈົ້າທັງຫລາຍວ່າ ເປັນຜູ້ບົວລະບັດຂອງພຣະເຈົ້າຂອງເຮົາ
ເຈົ້າທັງຫລາຍຈະໄດ້ກິນຄວາມຮັ່ງມີຂອງບັນດາປະຊາຊາດ
ແລະເຈົ້າຈະອວດໃນສະຫງ່າລາສີຂອງພວກເຂົາທັງຫລາຍ
7 ແທນຄວາມອາຍຂອງເຈົ້າທັງຫລາຍ ເຈົ້າຈະໄດ້ສ່ວນສອງສ່ວນ
ແທນຄວາມໂສກເສົ້າ ພວກເຂົາທັງຫລາຍຈະຊົມຊື່ນຍິນດີໃນສ່ວນຂອງຕົນ
ເຫດສັນນັ້ນ ໃນແຜ່ນດິນຂອງພວກເຂົາທັງຫລາຍ
ພວກເຂົາຈະໄດ້ສອງສ່ວນເປັນກຳມະສິດ
ຄວາມຊື່ນບານເປັນນິດຈະເປັນຂອງພວກເຂົາ
8 ເພາະວ່າເຮົາຄືພຣະຜູ້ເປັນເຈົ້າຮັກຄວາມຍຸດຕິທຳ
ເຮົາກຽດຊັງການລັກເພື່ອໄດ້ເຄື່ອງເຜົາບູຊາ
ເຮົາຈະນຳກິດຈະການຂອງພວກເຂົາດ້ວຍຄວາມຈິງ
ແລະເຮົາຈະເຮັດພັນທະສັນຍາອັນຕະຫລອດໄປກັບພວກເຂົາ
9 ເຊື້ອສາຍຂອງພວກເຂົາທັງຫລາຍຈະເປັນທີ່ຮູ້ຈັກກັນໃນທ່າມກາງບັນດາປະຊາຊາດ
ແລະລູກຫລານຂອງພວກເຂົາໃນທ່າມກາງຊົນຊາດທັງຫລາຍ
ທຸກຄົນທີ່ໄດ້ເຫັນພວກເຂົາຈະຈື່ໄດ້ວ່າ
ພວກເຂົາເປັນເຊື້ອສາຍຊຶ່ງພຣະຜູ້ເປັນເຈົ້າອຳນວຍພຣະພອນ”
10 ຂ້າພະເຈົ້າຈະຊົມຊື່ນຍິນດີຢ່າງຍິ່ງໃນພຣະຜູ້ເປັນເຈົ້າ

ຈິດໃຈຂອງຂ້າພະເຈົ້າຈະຊື່ນບານໃນ ພຣະເຈົ້າ ຂອງຂ້າພະເຈົ້າ
ເພາະວ່າພຣະອົງໄດ້ສວມຂ້າພະເຈົ້າດ້ວຍເສື້ອຜ້າແຫ່ງຄວາມພົ້ນ
ພຣະອົງປົກຂ້າພະເຈົ້າດ້ວຍເສື້ອແຫ່ງຄວາມຊອບທຳ
ເໝືອນຢ່າງເຈົ້າບ່າວປະດັບຕົວດ້ວຍເຄື່ອງປະດັບ
ແລະເຈົ້າສາວຕົກແຕ່ງຕົວດ້ວຍເພັດນິນຈິນດາ
11 ເພາະວ່າແຜ່ນດິນໂລກໄດ້ເກີດໜໍ່ຂອງມັນ
ແລະສວນເຮັດໃຫ້ສິ່ງທີ່ຫວ່ານໃນນັ້ນງອກຂຶ້ນມາສັນໃດ
ອົງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຈະເຮັດໃຫ້ຄວາມຊອບທຳ
ແລະການສັນລະເສີນງອກຂຶ້ນມາຕໍ່ໜ້າບັນດາປະຊາຊາດສັນນັ້ນ

# ບົດທີ 62

## ອິສຣາເອນຈະໄດ້ກັບຄືນມາໃໝ່

1 ເພື່ອເຫັນແກ່ເມືອງຊີໂອນ ຂ້າພະເຈົ້າຈະບໍ່ລະງັບສຽງ
ແລະເພື່ອເຫັນແກ່ ເຢຣູຊາເລັມ ຂ້າພະເຈົ້າຈະບໍ່ມິດງຽບຢູ່
ຈົນກວ່າຄວາມຊອບທຳຂອງກຸງນີ້ຈະອອກໄປເໝືອນຢ່າງຄວາມສຸກໃສ
ແລະຄວາມພົ້ນຂອງກຸງນີ້ເໝືອນຢ່າງໂຄມໄຟທີ່ລຸກຢູ່
2 ບັນດາປະຊາຊາດຈະເຫັນຄວາມຊອບທຳຂອງເຈົ້າ
ແລະກະສັດທັງຫລາຍຈະເຫັນສະຫງ່າລາສີຂອງເຈົ້າ
ພວກເຂົາຈະເອີ້ນເຈົ້າດ້ວຍຊື່ໃໝ່ ຊຶ່ງພຣະໂອດຂອງ ພຣະຜູ້ເປັນເຈົ້າ ຈະປະທານ
3 ເຈົ້າຈະເປັນມົງກຸດແຫ່ງສະຫງ່າລາສີໃນພຣະຫັດຂອງ ພຣະຜູ້ເປັນເຈົ້າ
ແລະເປັນລາຊະມົງກຸດໃນພຣະຫັດແຫ່ງ ພຣະເຈົ້າ ຂອງເຈົ້າ
4 ພວກເຂົາຈະບໍ່ເອີ້ນເຈົ້າອີກວ່າ "ຖືກປະຖິ້ມແລ້ວ"
ແລະພວກເຂົາຈະບໍ່ເອີ້ນແຜ່ນດິນຂອງເຈົ້າອີກວ່າ "ບ່ອນທີ່ຮ້າງເປົ່າ"
ແຕ່ຈະເອີ້ນເຈົ້າວ່າ "ຄວາມພໍໃຈຂອງເຮົາໃນເພິ່ນ"
ແລະເອີ້ນແຜ່ນດິນຂອງເຈົ້າວ່າ "ມີຜົວ" ເພາະວ່າ ພຣະຜູ້ເປັນເຈົ້າ ປິຕິຍິນດີໃນເຈົ້າ
ແລະແຜ່ນດິນຂອງເຈົ້າຈະແຕ່ງງານ
5 ເພາະວ່າຊາຍໜຸ່ມແຕ່ງງານກັບຍິງພົມມະຈາລີສັນໃດ
ລູກຊາຍທັງຫລາຍຂອງເຈົ້າຈະແຕ່ງກັບເຈົ້າສັນນັ້ນ
ແລະເຈົ້າບ່າວຊົມຊື່ນຍິນດີເພາະເຈົ້າສາວສັນໃດ
ພຣະເຈົ້າ ຂອງເຈົ້າຈະຊົມຊື່ນຍິນດີເພາະເຈົ້າສັນນັ້ນ
6 ໂອເຢຣູຊາເລັມ ເອີຍ ເທິງກຳແພງຂອງເຈົ້າ ເຮົາໄດ້ວາງຍາມໄວ້
ຕະຫລອດກາງເວັນ ແລະຕະຫລອດກາງຄືນ
ພວກເຂົາທັງຫລາຍຈະບໍ່ລະງັບສຽງເລີຍ

ເຈົ້າທັງຫລາຍຜູ້ທີ່ກ່າວເຖິງ ພຣະຜູ້ເປັນເຈົ້າບໍ່ຕ້ອງລະງັບສຽງ
7 ແລະຢ່າໃຫ້ພຣະອົງຢຸດພັກຈົນກວ່າພຣະອົງຈະສະຖາປະນາ
ແລະເຮັດໃຫ້ກຸງ ເຢຣູຊາເລັມ ເປັນທີ່ສັນລະເສີນໃນແຜ່ນດິນໂລກ
8 ພຣະຜູ້ເປັນເຈົ້າປະຕິຍານດ້ວຍມືຂວາຂອງພຣະອົງ
ແລະດ້ວຍແຂນທີ່ມີລິດທານຸພາບຂອງພຣະອົງວ່າ
"ແນ່ນອນເຮົາຈະບໍ່ໃຫ້ເຂົ້າຂອງເຈົ້າເປັນອາຫານຂອງສັດຕູຂອງເຈົ້າອີກ
ແລະບັນດາລູກຊາຍຂອງຄົນຕ່າງດ້າວຈະບໍ່ດື່ມນໍ້າອະງຸ່ນຂອງເຈົ້າ
ຊຶ່ງເຈົ້າໄດ້ມາດ້ວຍຄວາມຍາກລຳບາກນັ້ນ
9 ແຕ່ຜູ້ໃດທີ່ເກັບກ່ຽວໄວ້ຈະໄດ້ກິນ ແລະສັນລະເສີນ ພຣະຜູ້ເປັນເຈົ້າ
ແລະບັນດາຜູ້ທີ່ເກັບຮວບຮວມຈະໄດ້ດື່ມໃນສະຖານທີ່ອັນບໍລິສຸດຂອງເຮົາ"
10 ຈົ່ງໄປ ຈົ່ງໄປທາງປະຕູເມືອງ ຈັດຕຽມທາງໄວ້ໃຫ້ຊົນຊາດນີ້
ຈົ່ງພູນ ຈົ່ງພູນທາງຫລວງຂຶ້ນ ຈົ່ງເກັບກວາດຫີນໃຫ້ໝົດ
ຈົ່ງຍົກສັນຍານໄວ້ເໜືອຊົນຊາດທັງຫລາຍ
11 ເບິ່ງແມພຣະຜູ້ເປັນເຈົ້າໄດ້ຮ້ອງປະກາດໃຫ້ໄດ້ຍິນເຖິງປາຍແຜ່ນດິນໂລກວ່າ
"ຈົ່ງກ່າວແກ່ທິດາຂອງເມືອງຊີໂອນວ່າ 'ເບິ່ງແມ ຄວາມພົ້ນຂອງເຈົ້າມາ
ເບິ່ງແມ ລາງວັນຂອງພຣະອົງກໍຢູ່ກັບພຣະອົງ
ແລະພະລາຊະກິດຂອງພຣະອົງກໍຢູ່ຕໍ່ພຣະພັກຂອງພຣະອົງ'"
12 ແລະຄົນຈະເອີ້ນພວກເຂົາທັງຫລາຍວ່າ "ປະຊາຊົນບໍລິສຸດ
ຜູ້ຮັບໄຖ່ໄວ້ແລ້ວຂອງ ພຣະຜູ້ເປັນເຈົ້າ"
ແລະຈະເອີ້ນເຈົ້າວ່າ "ຫາມາໄດ້ ເມືອງທີ່ບໍ່ໄດ້ຖືກປະຖິ້ມ"

# ບົດທີ 63

## ອ່າງຢຽບອະງຸ່ນແຫ່ງພຣະພິໂລດຂອງພຣະເຈົ້າ

1 ໃຜນໍທີ່ມາຈາກເມືອງ ເອໂດມ ສວມເສື້ອຜ້າຍ້ອມສີຈາກເມືອງ ໂບຊະຣາ
ພຣະອົງຜູ້ຊົງສະຫງ່າງາມໃນເຄື່ອງນຸ່ງຂອງພຣະອົງ
ສະເດັດມາດ້ວຍກຳລັງຍິ່ງໃຫຍ່ຂອງພຣະອົງ
"ເຮົາເອງ ຮ້ອງປະກາດໃນຄວາມຊອບທຳ
ແລະມີລິດທານຸພາບທີ່ຈະຊ່ວຍໃຫ້ລອດພົ້ນ"
2 ເປັນຫຍັງເຄື່ອງນຸ່ງຂອງພຣະອົງຈຶ່ງສີແດງ
ແລະເສື້ອຜ້າຂອງພຣະອົງຄືກັນກັບຂອງຄົນທີ່ຢຽບໃນອ່າງຢຽບອະງຸ່ນ
3 "ເຮົາໄດ້ຢຽບອະງຸ່ນແຕ່ຜູ້ດຽວ ແລະບໍ່ມີໃຜຈາກຊົນຊາດທັງຫລາຍຢູ່ກັບເຮົາເລີຍ
ເຮົາຈະຢຽບມັນດ້ວຍຄວາມຄຽດຮ້າຍຂອງເຮົາ
ເຮົາຢຽບມັນດ້ວຍຄວາມພິໂລດຂອງເຮົາ

ເລືອດຂອງພວກເຂົາຈະຕິດຢູ່ເທິງເສື້ອຜ້າຂອງເຮົາ
ແລະເຮົາຈະເຮັດໃຫ້ເສື້ອຜ້າຂອງເຮົາເປື້ອນໝົດ
4 ເພາະວ່າມື້ແກ້ແຄ້ນຢູ່ໃນໃຈຂອງເຮົາ ແລະປີແຫ່ງການໄຖ່ຂອງເຮົາໄດ້ມາເຖິງ
5 ເຮົາເບິ່ງ ແຕ່ບໍ່ມີຜູ້ໃດຊ່ວຍເຫລືອ ເຮົາປະຫລາດໃຈວ່າບໍ່ມີຜູ້ຍົກໄວ້
ເຫດສັນນັ້ນ ແຂນຂອງເຮົາເອງຈຶ່ງນໍາຄວາມພົ້ນມາໃຫ້ເຮົາ
ແລະຄວາມພິໂລດຂອງເຮົາ ຄໍ້າຊູເຮົາໄວ້
6 ເຮົາຈະຢຽບຊົນຊາດທັງຫລາຍລົງດ້ວຍຄວາມຄຽດຮ້າຍຂອງເຮົາ
ເຮົາເຮັດໃຫ້ພວກເຂົາເມົາດ້ວຍຄວາມພິໂລດຂອງເຮົາ
ແລະເຮົາຈະເຮັດໃຫ້ກໍາລັງຂອງພວກເຂົາຫລຸດນ້ອຍລົງເທິງແຜ່ນດິນໂລກ”

## ພຣະເຈົ້າດູແລຮັກສາອິສຣາເອນ

7 ຂ້າພະເຈົ້າຈະກ່າວເຖິງຄວາມເມດຕາແຫ່ງ ພຣະຜູ້ເປັນເຈົ້າ
ແລະການສັນລະເສີນຂອງ ພຣະຜູ້ເປັນເຈົ້າ
ຕາມບັນດາຊຶ່ງ ພຣະຜູ້ເປັນເຈົ້າປະທານແກ່ພວກເຮົາ
ແລະຄວາມດີຍິ່ງໃຫຍ່ຕໍ່ວົງວານຂອງ ອິສຣາເອນ
ຊຶ່ງພຣະອົງອະນຸຍາດໃຫ້ຕາມພຣະກະລຸນາຂອງພຣະອົງ
ຕາມຄວາມເມດຕາອັນອຸດົມສົມບູນຂອງພຣະອົງ
8 ເພາະວ່າພຣະອົງບອກວ່າ “ແນ່ນອນ ພວກເຂົາເປັນຊົນຊາດຂອງເຮົາ
ລູກ ຜູ້ຈະບໍ່ເວົ້າຕົວະ”
ແລະພຣະອົງໄດ້ເປັນ ພຣະຜູ້ຊ່ອຍ ໃຫ້ລອດພົ້ນຂອງເຮົາ
9 ພຣະອົງທຸກພຣະໄທໃນຄວາມທຸກໃຈທັງໝົດຂອງພວກເຂົາ
ແລະທູດສະຫວັນທີ່ຢູ່ຕໍ່ພຣະພັກພຣະອົງ
ພຣະອົງຊ່ວຍພວກເຂົາທັງຫລາຍໃຫ້ລອດພົ້ນ
ພຣະອົງໄຖ່ພວກເຂົາດ້ວຍຄວາມຮັກຂອງພຣະອົງ
ແລະດ້ວຍຄວາມສົງສານຂອງພຣະອົງ ພຣະອົງຍົກພວກເຂົາຂຶ້ນ
ແລະຫອບພວກເຂົາໄປຕະຫລອດການ
10 ແຕ່ພວກເຂົາທັງຫລາຍໄດ້ກະບົດ
ແລະເຮັດໃຫ້ ພຣະວິນຍານບໍລິສຸດ ຂອງພຣະອົງເສຍພຣະໄທ
ສະນັ້ນ ພຣະອົງຈຶ່ງຫັນເປັນສັດຕູຂອງພວກເຂົາທັງຫລາຍ
ແລະພຣະອົງຕໍ່ສູ້ກັບພວກເຂົາທັງຫລາຍເອງ
11 ແລ້ວພຣະອົງລະນຶກເຖິງສະໄໝເກົ່າກ່ອນ ເຖິງ ໂມເຊ ເຖິງຊົນຊາດຂອງພຣະອົງວ່າ
“ພຣະອົງຜູ້ນໍາພວກເຂົາທັງຫລາຍຂຶ້ນມາຈາກທະເລ
ພ້ອມກັບຜູ້ລ້ຽງແບ້ແກະຂອງພຣະອົງຢູ່ໃສ ພຣະອົງຢູ່ໃສ
ຜູ້ຊຶ່ງບັນຈຸ ພຣະວິນຍານບໍລິສຸດ ຂອງພຣະອົງທ່າມກາງພວກເຂົາ

12 ຜູ້ນຳພວກເຂົາທັງຫລາຍທາງມືຂວາຂອງ ໂມເຊ
ດ້ວຍພຣະກອນອັນຮຸ່ງເຮືອງຂອງພຣະອົງ
ຜູ້ແຍກນໍ້າອອກຕໍ່ໜ້າພວກເຂົາ ເພື່ອສ້າງພຣະນາມນິລັນດອນໃຫ້ພຣະອົງເອງ
13 ຜູ້ໄດ້ນຳພວກເຂົາຂ້າມທະເລນັ້ນຄືມ້າໃນຖິ່ນແຫ້ງແລ້ງກັນດານ
ເພື່ອພວກເຂົາທັງຫລາຍຈະບໍ່ໄດ້ສະດຸດ
14 ເໝືອນຢ່າງສັດລ້ຽງໄປຍັງຮ່ອມພູເຂົາສັນໃດ
ພຣະວິນຍານ ຂອງ ພຣະຜູ້ເປັນເຈົ້າປະທານໃຫ້ພວກເຂົາຢຸດພັກສັນນັ້ນ”
ພຣະອົງຈຶ່ງນຳຊົນຊາດຂອງພຣະອົງ
ເພື່ອຈະສ້າງພຣະນາມອັນຮຸ່ງເຮືອງແດ່ພຣະອົງເອງ
15 ຂໍທອດພຣະເນດລົງມາຈາກຟ້າສະຫວັນ
ແລະເບິ່ງຈາກສະຖານທີ່ບໍລິສຸດ ແລະຮຸ່ງເຮືອງຂອງພຣະອົງ
ຄວາມກະຕືລືລົ້ນ ແລະລິດທານຸພາບຂອງພຣະອົງຢູ່ໃສ
ພຣະໄທກະລຸນາ ແລະພຣະເມດຕາຂອງພຣະອົງ
ຕໍ່ຂ້າພຣະອົງຢູ່ໃສ ໄດ້ຖືກຍຶດໄວ້ແລ້ວບໍ
16 ແນ່ນອນ ພຣະອົງເປັນພໍ່ຂອງຂ້າພະອົງທັງຫລາຍ
ເຖິງແມ່ນອັບຣາຮາມບໍ່ໄດ້ຮູ້ຈັກຂ້າພະອົງ
ແລະ ອິສຣາເອນບໍ່ຈື່ຂ້າພະອົງໄດ້ ຂ້າແດ່ພຣະຜູ້ເປັນເຈົ້າ
ພຣະອົງເປັນພໍ່ ແລະພຣະຜູ້ໄຖ່ຂອງຂ້າພະອົງທັງຫລາຍ
ພຣະນາມຂອງພຣະອົງດຳລົງຢູ່ຕັ້ງແຕ່ຊົ່ວອາຍຸທັງປວງ
17 ຂ້າແດ່ພຣະຜູ້ເປັນເຈົ້າ
ເຫດໃດພຣະອົງຈຶ່ງໃຫ້ຂ້າພະອົງທັງຫລາຍຜິດໄປຈາກທາງທັງຫລາຍຂອງພຣະອົງ
ແລະເຮັດໃຫ້ໃຈຂອງຂ້າພະອົງແຂງກະດ້າງຈົນຂ້າພະອົງບໍ່ຢຳເກງພຣະອົງ
ຂໍພຣະອົງກັບມາເພາະເຫັນແກ່ບັນດາຜູ້ຮັບໃຊ້ຂອງພຣະອົງຄື
ຕະກູນທັງຫລາຍອັນເປັນມໍລະດົກຂອງພຣະອົງ
18 ຊົນຊາດແຫ່ງຄວາມບໍລິສຸດຂອງພຣະອົງໄດ້ອາໄສຢູ່ຫັ້ນເວລາໜ້ອຍດຽວໜຶ່ງ
ສັດຕູຂອງຂ້າພະອົງທັງຫລາຍໄດ້ຢຽບຢໍ່າສະຖານທີ່ບໍລິສຸດຂອງພຣະອົງລົງ
19 ຂ້າພະອົງທັງຫລາຍເປັນຂອງພຣະອົງ ພຣະອົງບໍ່ເຄີຍປົກຄອງພວກເຂົາເລີຍ
ພວກເຂົາບໍ່ໄດ້ຖືກເອີ້ນໂດຍພຣະນາມຂອງພຣະອົງ

# ບົດທີ 64

## ພຣະເຈົ້າເປັນຊ່າງປັ້ນ ເຮົາເປັນດິນໜຽວ

1 ໂອ ຖ້າຫາກວ່າພຣະອົງຈະແຫກຟ້າສະຫວັນສະເດັດລົງມາໄດ້
ເພື່ອພູເຂົາຈະໄຫລລົງມາຕໍ່ພຣະພັກ ພຣະອົງ

2 ເປັນດັ່ງໄຟທີ່ເຮັດໃຫ້ລະລາຍໄໝ້ຢູ່ ແລະໄຟເຮັດໃຫ້ນ້ຳຮ້ອນ
ເພື່ອໃຫ້ພຣະນາມຂອງພຣະອົງເປັນທີ່ຮູ້ຈັກແກ່ສັດຕູຂອງພຣະອົງ
ເພື່ອບັນດາປະຊາຊາດຈະສະເທືອນຕໍ່ພຣະພັກພຣະອົງ
3 ເມື່ອພຣະອົງກະທຳສິ່ງໜ້າຢ້ານທີ່ພວກຂ້າພະອົງຄາດບໍ່ເຖິງ
ພຣະອົງສະເດັດລົງມາ ພູເຂົາກໍໄຫລລົງມາຕໍ່ພຣະພັກພຣະອົງ
4 ຂ້າແດ່ພຣະເຈົ້າຕັ້ງແຕ່ເລີ່ມຕົ້ນຂອງໂລກ
ບໍ່ມີຜູ້ໃດໄດ້ຍິນ ຫລືຮູ້ດ້ວຍຫູ ຫລືຕາໄດ້ເຫັນ
ສິ່ງທັງຫລາຍຊຶ່ງພຣະອົງຕຽມໄວ້ເພື່ອບັນດາຜູ້ທີ່ຄອຍຖ້າພຣະອົງ ນອກເໜືອພຣະອົງ
5 ພຣະອົງພົບພວກເຂົາທີ່ຊື່ນບານ ແລະເຮັດຄວາມຊອບທຳ
ບັນດາຜູ້ທີ່ຈື່ພຣະອົງໄດ້ໃນວິທີການຂອງພຣະອົງ
ເບິ່ງແມ ພຣະອົງໂກດຮ້າຍ ເພາະວ່າຂ້າພະອົງທັງຫລາຍເຮັດບາບແລ້ວ
ຂ້າພະອົງທັງຫລາຍຍັງຢູ່ໃນບາບເປັນເວລາດົນ
ແລະຂ້າພະອົງທັງຫລາຍຈະລອດພົ້ນ
6 ຂ້າພະອົງທຸກຄົນໄດ້ກາຍເປັນຄືກັບສິ່ງທີ່ບໍ່ສະອາດ
ແລະການກະທຳອັນຊອບທຳຂອງຂ້າພະອົງທັງໝົດຄືເສື້ອຜ້າທີ່ເປິເປື້ອນ
ຂ້າພະອົງທຸກຄົນຫ່ຽວລົງຄືໃບໄມ້
ແລະຄວາມຊົ່ວຊ້າຂອງຂ້າພະອົງທັງຫລາຍໄດ້ພັດພາຂ້າພະອົງໄປຄືລົມ
7 ບໍ່ມີຜູ້ໃດຮ້ອງທູນຕອບຕໍ່ພຣະນາມຂອງພຣະອົງ
ບໍ່ມີຜູ້ໃດຂໍຄວາມຊ່ວຍເຫລືອຈາກພຣະອົງ
ເພາະວ່າພຣະອົງເຊື່ອງພຣະພັກຂອງພຣະອົງຈາກຂ້າພະອົງທັງຫລາຍ
ແລະໄດ້ທຳລາຍຂ້າພະອົງທັງຫລາຍເພາະເຫດຄວາມຊົ່ວຊ້າຂອງຂ້າພະອົງ
8 ຂ້າແດ່ພຣະຜູ້ເປັນເຈົ້າ ແຕ່ບັດນີ້ພຣະອົງຍັງເປັນພໍ່ຂອງຂ້າພະອົງ
ຂ້າພະອົງທັງຫລາຍເປັນດິນໜຽວ ແລະພຣະອົງເປັນຊ່າງປັ້ນ
ຂ້າພະອົງທຸກຄົນເປັນຜົນຈາກພຣະຫັດຂອງພຣະອົງ
9 ຂ້າແດ່ພຣະຜູ້ເປັນເຈົ້າຂໍຢ່າໂກດຮ້າຍຫລາຍ
ແລະຂໍຢ່າຈົດຈຳຄວາມຊົ່ວຊ້າໄວ້ເປັນນິດ
ເບິ່ງແມ ຂໍພິຈາລະນາຂ້າພະອົງທັງໝົດຜູ້ເປັນຊົນຊາດຂອງພຣະອົງ
10 ຫົວເມືອງບໍລິສຸດຂອງພຣະອົງກາຍເປັນຖິ່ນແຫ້ງແລ້ງກັນດານ
ເມືອງຊີໂອນໄດ້ກາຍເປັນຖິ່ນແຫ້ງແລ້ງກັນດານ
ເຢຣູຊາເລັມເປັນບ່ອນຮ້າງເປົ່າ
11 ວິຫານອັນບໍລິສຸດ ແລະງາມຂອງຂ້າພະອົງທັງຫລາຍ
ບ່ອນຊຶ່ງບັນພະບູລຸດຂອງຂ້າພະອົງສັນລະເສີນພຣະອົງກໍຖືກໄຟເຜົາແລ້ວ
ແລະຄວາມຫວັງຂອງຂ້າພະອົງທັງໝົດໄດ້ຖືກຖິ້ມຮ້າງ

12 ຂ້າແດ່ພຣະຜູ້ເປັນເຈົ້າ ເປັນຢ່າງນີ້ແລ້ວ ພຣະອົງຍັງຈະຢຸດຢັ້ງພຣະອົງໄວ້ບໍ
ພຣະອົງຈະງຽບຢູ່ ແລະຂົ່ມໃຈພວກຂ້າພະອົງຢ່າງເຖິງຂະໜາດບໍ

# ບົດທີ 65

## ພຣະເຈົ້າຕອບພວກອິສຣາເອນທີ່ເຫລືອຢູ່

1 ພຣະຜູ້ເປັນເຈົ້າຊົງກ່າວວ່າ,
“ເຮົາພ້ອມທີ່ຈະຕອບຄຳອ້ອນວອນຂອງໄພ່ພົນຂອງເຮົາ
ເຮົາພ້ອມແລ້ວທີ່ຈະໃຫ້ແກ່ຜູ້ທີ່ບໍ່ໄດ້ຊອກສະແຫວງຫາເຮົາ
ເຮົາກ່າວວ່າ ‘ເຮົາຢູ່ບ່ອນນີ້ ເຮົາຢູ່ບ່ອນນີ້’
ຕໍ່ປະຊາຊາດທີ່ພວກເຂົາບໍ່ໄດ້ເອີ້ນໂດຍນາມຂອງເຮົາ
2 ເຮົາຍື່ນມືຂອງເຮົາອອກຕະຫລອດມື້ຕໍ່ຊົນຊາດທີ່ມັກກະບົດ
ຜູ້ດຳເນີນໃນທາງທີ່ບໍ່ດີ ຕິດຕາມອຸບາຍຂອງຕົນເອງ
3 ຊົນຊາດທີ່ຍົວະເຮົາໃຫ້ໂກດຮ້າຍຕໍ່ໜ້າຢູ່ສະເໝີ ເຮັດການບູຊາຕາມສວນ
ແລະເຜົາເຄື່ອງຫອມຢູ່ເທິງກອງຫີນ
4 ຜູ້ນັ່ງຢູ່ໃນຂຸມຝັງສົບ ແລະຄ້າງຄືນໃນບ່ອນລັບລີ້ ຜູ້ກິນຊີ້ນໝູ
ແລະໃນພາຊະນະຂອງພວກເຂົາມີແກງຊຶ່ງເຮັດດ້ວຍສິ່ງທີ່ໜ້າກຽດຊັງ
5 ຜູ້ກ່າວວ່າ ‘ອອກໄປຫ່າງໆ ຢ່າເຂົ້າມາໃກ້ ເພາະວ່າຂ້ອຍບໍລິສຸດກວ່າເຈົ້າ’
ເຫລົ່ານີ້ເປັນຄວັນໄຟຢູ່ໃນດັງຂອງເຮົາ ເປັນໄຟຊຶ່ງໄໝ້ຢູ່ໝົດມື້
6 ເບິ່ງແມ ມີຂຽນໄວ້ຕໍ່ໜ້າເຮົາວ່າ ‘ເຮົາຈະບໍ່ມິດງຽບຢູ່ ແຕ່ເຮົາຈະຕອບສະໜອງ
ແລະ ເຮົາຈະຕອບສະໜອງໄວ້ໃນເອິກຂອງພວກເຂົາ
7 ທັງຄວາມຊົ່ວຊ້າຂອງເຈົ້າ
ແລະຄວາມຊົ່ວຊ້າຂອງບັນພະບູລຸດຂອງເຈົ້າທັງຫລາຍລວມກັນດ້ວຍ’”
ພຣະຜູ້ເປັນເຈົ້າບອກດັ່ງນີ້ວ່າ “ພວກເຂົາໄດ້ເຜົາເຄື່ອງຫອມເທິງພູເຂົາ
ແລະກ່າວຄຳຫຍາບຄາຍຕໍ່ເຮົາເທິງໂນນພູ
ເຮົາຈຶ່ງຈະຕວງກິດຈະການເກົ່າເຂົ້າໄປໃນເອິກຂອງພວກເຂົາ”
8 ພຣະຜູ້ເປັນເຈົ້າບອກດັ່ງນີ້ວ່າ “ນໍ້າອະງຸ່ນໃໝ່ບໍ່ໄດ້ຈາກພວງອະງຸ່ນ ແລະເຂົາກ່າວວ່າ
‘ຢ່າທຳລາຍມັນເລີຍ ເພາະວ່າມີພຣະພອນຢູ່ໃນນັ້ນ’
ສັນໃດ ເຮົາກໍຈະເຮັດດ້ວຍເຫັນແກ່ຜູ້ຮັບໃຊ້ຂອງເຮົາ
ແລະບໍ່ທຳລາຍພວກເຂົາໝົດບາດດຽວສັນນັ້ນ
9 ເຮົາຈະນຳເຊື້ອສາຍອອກມາຈາກຢາໂຄບ
ແລະຜູ້ຮັບມໍລະດົກພູເຂົາທັງຫລາຍຂອງເຮົາຈາກຢູດາ
ຜູ້ເລືອກສັນຂອງເຮົາຈະໄດ້ຮັບມັນເປັນມໍລະດົກ
ແລະບັນດາຜູ້ຮັບໃຊ້ຂອງເຮົາຈະອາໄສຢູ່ທັ້ນ

10 ຊາໂຣນ ຈະເປັນເດີ່ນຫຍ້າສຳລັບຝູງແບ້ແກະ
ແລະຮ່ອມພູເຂົາອາໂຄ ຈະເປັນບ່ອນໃຫ້ຝູງງົວນອນ
ເພື່ອຊົນຊາດຂອງເຮົາທີ່ໄດ້ສະແຫວງຫາເຮົາ
11 ແຕ່ເຈົ້າທັງຫລາຍຈະປະຖິ້ມພຣະຜູ້ເປັນເຈົ້າຜູ້ລືມພູເຂົາບໍລິສຸດຂອງເຮົາ
ຜູ້ຈັດໂຕະໄວ້ໃຫ້ແກ່ພະໂຊກ ແລະຈັດຫາເຄື່ອງດື່ມບູຊາໃຫ້ແກ່ພະເຄາະ
12 ເຮົາຈຶ່ງຈະເອົາເຈົ້າທັງຫລາຍຟາດເຄາະໃຫ້ດາບໄປ
ແລະເຈົ້າທຸກຄົນຈະຕ້ອງກົ້ມຕົວລົງຕໍ່ການຖືກຂ້າເພາະວ່າເມື່ອເຮົາເອີ້ນ
ເຈົ້າບໍ່ຕອບ ເມື່ອເຮົາເວົ້າ ເຈົ້າບໍ່ຟັງ
ແຕ່ເຈົ້າໄດ້ກະທຳສິ່ງທີ່ຊົ່ວຮ້າຍໃນສາຍຕາຂອງເຮົາ
ແລະເລືອກສິ່ງທີ່ເຮົາບໍ່ປິຕິຍິນດີດ້ວຍ”
13 ເຫດສັນນັ້ນ ອົງພຣະຜູ້ເປັນເຈົ້າພຣະເຈົ້າຈຶ່ງບອກດັ່ງນີ້ວ່າ
“ເບິ່ງແມ ຜູ້ຮັບໃຊ້ທັງຫລາຍຂອງເຮົາຈະໄດ້ກິນ ແຕ່ເຈົ້າທັງຫລາຍຈະຫິວ
ເບິ່ງແມ ຜູ້ຮັບໃຊ້ຂອງເຮົາຈະໄດ້ດື່ມ ແຕ່ເຈົ້າຈະກະຫາຍນ້ຳ
ເບິ່ງແມ ຜູ້ຮັບໃຊ້ຂອງເຮົາຈະຊົມຊື່ນຍິນດີ ແຕ່ເຈົ້າຈະໄດ້ອັບອາຍ
14 ເບິ່ງແມ ຜູ້ຮັບໃຊ້ຂອງເຮົາຈະຮ້ອງເພງເພາະວ່າໃຈຍິນດີ
ແຕ່ເຈົ້າທັງຫລາຍຈະຮ້ອງອອກມາເພາະວ່າເສຍໃຈ
ແລະຈະຄວນຄາງເພາະວ່າຈິດວິນຍານຂາດໄປ
15 ເຈົ້າທັງຫລາຍຈະຖິ້ມຊື່ຂອງເຈົ້າໄວ້ແກ່ຜູ້ເລືອກສັນຂອງເຮົາເພື່ອໃຊ້ສາບແຊ່ງ
ແລະອົງພຣະຜູ້ເປັນເຈົ້າພຣະເຈົ້າຈະສັງຫານເຈົ້າ
ແຕ່ຈະເອີ້ນຊື່ຜູ້ຮັບໃຊ້ຂອງພຣະອົງດ້ວຍຊື່ອື່ນ
16 ດັ່ງນັ້ນ ຜູ້ໃດທີ່ຂໍພອນໃຫ້ຕົນເອງໃນແຜ່ນດິນໂລກ
ຈະຂໍພອນໃຫ້ຕົນເອງໃນພຣະນາມພຣະເຈົ້າແຫ່ງຄວາມຈິງ
ແລະຜູ້ໃດທີ່ປະຕິຍານໃນແຜ່ນດິນໂລກ
ຈະປະຕິຍານໃນນາມພຣະເຈົ້າແຫ່ງຄວາມຈິງ
ເພາະວ່າຄວາມລຳບາກເກົ່າແກ່ນັ້ນກໍລືມໄປແລ້ວ
ແລະເຊື່ອງຈາກຕາຂອງເຮົາ

## ແຜ່ນດິນໂລກໃໝ່ ແລະຟ້າສະຫວັນໃໝ່

17 ເຮົາຈະສ້າງຟ້າສະຫວັນໃໝ່ແລະແຜ່ນດິນໂລກໃໝ່
ເພາະວ່າສິ່ງເກົ່າກ່ອນນັ້ນຈະບໍ່ຈື່ກັນ ຫລືຄຶດໄດ້ອີກ
18 ແຕ່ຈົ່ງຊື່ນບານ ແລະຊົມຊື່ນຍິນດີເປັນນິດໃນສິ່ງຊຶ່ງເຮົາສ້າງຂຶ້ນ
ເພາະວ່າເຮົາສ້າງ ເຢຣູຊາເລັມ ໃຫ້ເປັນທີ່ຊົມຊື່ນຍິນດີ
ແລະຊົນຊາດຂອງເມືອງນັ້ນໃຫ້ເປັນຄວາມຊື່ນບານ
19 ເຮົາຈະຊົມຊື່ນຍິນດີດ້ວຍ ເຢຣູຊາເລັມ

ແລະຊື່ນບານດ້ວຍຊົນຊາດຂອງເຮົາຈະບໍ່ໄດ້ຍິນສຽງຮ້ອງໄຫ້ໃນເມືອງນັ້ນອີກ
ແລະສຽງຄວນຄາງ
20 ໃນນັ້ນຈະບໍ່ມີເດັກນ້ອຍທີ່ມີຊີວິດພຽງສອງສາມມື້ ຫລືຄົນແກ່ທີ່ມີອາຍຸບໍ່ຄົບກຳນົດ
ເພາະວ່າເດັກຈະມີອາຍຸໜຶ່ງຮ້ອຍປີຈຶ່ງຕາຍ
ແລະຄົນບາບທີ່ມີອາຍຸພຽງໜຶ່ງຮ້ອຍປີຈະເປັນທີ່ສາບແຊ່ງ
21 ພວກເຂົາຈະສ້າງບ້ານ ແລະເຂົ້າອາໄສຢູ່ໃນນັ້ນ
ພວກເຂົາຈະປູກສວນອະງຸ່ນ ແລະກິນໝາກຂອງມັນ
22 ພວກເຂົາຈະບໍ່ສ້າງ ແລະຄົນອື່ນເຂົ້າອາໄສຢູ່ ພວກເຂົາຈະບໍ່ປູກແລະຄົນອື່ນກິນ
ເພາະວ່າອາຍຸຊົນຊາດຂອງເຮົາຈະເປັນຄືກັບອາຍຸຂອງຕົ້ນໄມ້
ແລະຜູ້ເລືອກສັນຂອງເຮົາຈະໃຊ້ຜົນງານຈາກນໍ້າມືຂອງຕົນໄດ້ດົນ
23 ພວກເຂົາທັງຫລາຍຈະບໍ່ເຮັດວຽກໂດຍບໍ່ມີປະໂຫຍດ ຫລືເກີດລູກເພື່ອຄວາມຢ້ານກົວ
ເພາະວ່າພວກເຂົາເປັນເຊື້ອສາຍຂອງຜູ້ທີ່ໄດ້ຮັບພອນຂອງພຣະຜູ້ເປັນເຈົ້າ
ກັບລູກໆຂອງພວກເຂົາດ້ວຍ
24 ແລະຕໍ່ມາ ກ່ອນທີ່ພວກເຂົາຮ້ອງເອີ້ນ ເຮົາຈະຕອບ
ຂະນະທີ່ພວກເຂົາຍັງເວົ້າຢູ່ ເຮົາຈະຟັງ
25 ໝາປ່າ ແລະລູກແກະຈະຫາກິນຢູ່ນຳກັນ ສິງຈະກິນເຟືອງຄືງົວ
ແລະຂີ້ຝຸ່ນດິນຈະເປັນອາຫານຂອງງູ ມັນທັງຫລາຍຈະບໍ່ເຮັດອັນຕະລາຍ
ຫລືທຳລາຍພູເຂົາບໍລິສຸດຂອງເຮົາ”ພຣະຜູ້ເປັນເຈົ້າບອກດັ່ງນີ້

# ບົດທີ 66

## ພຣະພອນແຫ່ງອານາຈັກຂອງພຣະເຈົ້າ

1 ພຣະຜູ້ເປັນເຈົ້າບອກດັ່ງນີ້ວ່າ “ສະຫວັນເປັນບັນລັງຂອງເຮົາ
ແລະແຜ່ນດິນໂລກເປັນບ່ອນວາງຕີນຂອງເຮົາ

## ວິຫານຊຶ່ງເຈົ້າຈະສ້າງໃຫ້ເຮົານັ້ນຈະຢູ່ໃສ ແລະບ່ອນປະທັບຂອງເຮົາຢູ່ໃສ

2 ສິ່ງເຫລົ່ານີ້ມືຂອງເຮົາໄດ້ກະທຳທັງໝົດ ບັນດາສິ່ງເຫລົ່ານັ້ນຈຶ່ງເປັນຂຶ້ນມາ”
ພຣະຜູ້ເປັນເຈົ້າບອກດັ່ງນີ້ “ແຕ່ຄົນນີ້ຕ່າງຫາກທີ່ເຮົາຈະເບິ່ງ
ຄືຜູ້ທີ່ຖ່ອມຕົວ ແລະສຳນຶກຜິດໃນໃຈ ແລະຕົວສັ່ນເພາະຖ້ອຍຄຳຂອງເຮົາ
3 ຜູ້ຂ້າງົວຄືກັບຜູ້ຂ້າຄົນ ຜູ້ຂ້າລູກແກະຖວາຍຄືກັບຜູ້ຕັດຄໍໝາ
ຜູ້ນຳເຄື່ອງບູຊາພືດຜົນເປັນເມັດມາຖວາຍຄືກັບຜູ້ຖວາຍເລືອດໝູ
ຜູ້ທີ່ບູຊາດ້ວຍກຳຍານຄືກັບຜູ້ທີ່ສາທຸການຮູບເຄົາລົບ
ຄົນເຫລົ່ານີ້ຕ່າງກໍເລືອກທາງຂອງຕົນເອງ
ແລະຈິດໃຈຂອງພວກເຂົາປິຕິຍິນດີຢູ່ໃນສິ່ງໜ້າກຽດຊັງຂອງຕົນ

4 ເຮົາກໍຈະເລືອກຄວາມທຸກໃຈໃຫ້ພວກເຂົາດ້ວຍ
ແລະນຳສິ່ງທີ່ພວກເຂົາຢ້ານມາໃຫ້ພວກເຂົາ ເພາະເມື່ອເຮົາໄດ້ເອີ້ນ
ບໍ່ມີຈັກຄົນໜຶ່ງຕອບ ເມື່ອເຮົາເວົ້າ ພວກເຂົາບໍ່ຟັງ
ແຕ່ໄດ້ເຮັດສິ່ງທີ່ຊົ່ວຮ້າຍໃນສາຍຕາຂອງເຮົາ ແລະເລືອກສິ່ງທີ່ເຮົາບໍ່ປິຕິຍິນດີນຳ”
5 ເຈົ້າຜູ້ຕົວສັ່ນເພາະຖ້ອຍຄຳຂອງພຣະອົງ ຈົ່ງຟັງພຣະວັດຈະນະຂອງພຣະຜູ້ເປັນເຈົ້າ
“ພີ່ນ້ອງຂອງເຈົ້າຜູ້ຊຶ່ງກຽດຊັງເຈົ້າ
ແລະຖິ້ມເຈົ້າອອກໄປເພາະເຫັນແກ່ນາມຂອງເຮົາ
ໄດ້ເວົ້າວ່າ ‘ຂໍພຣະຜູ້ເປັນເຈົ້າໄດ້ຮັບກຽດ’
ແຕ່ພຣະອົງຈະໄດ້ປະກົດ ແລະເປັນຄວາມຊື່ນບານຂອງເຈົ້າ
ແລະພວກເຂົາເຫລົ່ານັ້ນແຫລະຈະຕ້ອງໄດ້ຮັບຄວາມອາຍ
6 ສຽງອຶກກະທຶກຈາກໃນເມືອງ ສຽງຈາກພຣະວິຫານ
ພຣະສຸລະສຽງຂອງພຣະຜູ້ເປັນເຈົ້າກຳລັງໃຫ້ການຕອບແທນຕໍ່ສັດຕູຂອງພຣະອົງ
7 ກ່ອນທີ່ນາງຈະປວດທ້ອງລູກ ນາງກໍເກີດລູກ ກ່ອນທີ່ຄວາມເຈັບປວດຈະມາເຖິງນາງ
ນາງກໍໃຫ້ກຳເນີດລູກຊາຍຄົນໜຶ່ງ
8 ໃຜເຄີຍໄດ້ຍິນສິ່ງນີ້ແດ່ ໃຜເຄີຍໄດ້ເຫັນສິ່ງນີ້ແດ່
ແຜ່ນດິນຈະໃຫ້ປົ່ງຂຶ້ນໃນມື້ດຽວບໍ ປະຊາຊາດຈະເກີດມາໃນບາດດຽວບໍ
ເພາະວ່າເມື່ອຊີໂອນປວດທ້ອງລູກ ນາງກໍເກີດລູກທັງຫລາຍຂອງນາງ
9 ເຮົາຈະນຳມາເຖິງກຳນົດເກີດ ແລ້ວຈະບໍ່ໃຫ້ເກີດບໍ”ພຣະຜູ້ເປັນເຈົ້າບອກດັ່ງນີ້
“ເຮົາຜູ້ເປັນເຫດໃຫ້ເກີດ ຈະປິດທ້ອງລູກບໍ”ພຣະເຈົ້າຂອງທ່ານບອກດັ່ງນີ້
10 ຈົ່ງຊົມຊື່ນຍິນດີກັບເຢຣູຊາເລັມແລະຍິນດີກັບນາງ ບັນດາເຈົ້າທີ່ຮັກນາງ
ຈົ່ງຊົມຊື່ນຍິນດີກັບນາງດ້ວຍຄວາມຊື່ນບານ ບັນດາເຈົ້າທີ່ໄວ້ທຸກເພື່ອນາງ
11 ເພື່ອເຈົ້າຈະໄດ້ດູດນົມ ແລະອີ່ມໃຈດ້ວຍເອິກອັນປະເລົ້າປະໂລມຂອງນາງ
ເພື່ອເຈົ້າຈະໄດ້ດື່ມນົມໃຫ້ໝົດ ດ້ວຍຄວາມປິຕິຍິນດີ
ຈາກສະຫງ່າລາສີອັນອຸດົມຂອງນາງ
12 ເພາະວ່າພຣະຜູ້ເປັນເຈົ້າບອກດັ່ງນີ້ວ່າ
“ເບິ່ງແມ ເຮົາຈະນຳສັນຕິສຸກມາເຖິງນາງຄືກັບແມ່ນ້ຳ
ແລະສະຫງ່າລາສີຂອງບັນດາປະຊາຊາດ ຄືສາຍນ້ຳທີ່ກຳລັງລົ້ນ
ແລະເຈົ້າທັງຫລາຍຈະໄດ້ດູດນົມ ນາງຈະອຸ້ມເຈົ້າໄວ້ທີ່ບັ້ນແອວຂອງນາງ
ແລະສັ່ນຂຶ້ນລົງທີ່ເຂົ່າຂອງນາງ
13 ເໝືອນດັ່ງຜູ້ທີ່ແມ່ຂອງຕົນເລົ້າໂລມ ເຮົາຈະເລົ້າໂລມເຈົ້າເຊັ່ນນັ້ນ
ແລະເຈົ້າຈະຮັບການເລົ້າໂລມໃນເຢຣູຊາເລັມ
14 ເມື່ອເຈົ້າເຫັນຢ່າງນີ້ ໃຈຂອງເຈົ້າຈະຊົມຊື່ນຍິນດີ
ກະດູກຂອງເຈົ້າຈະອອກດອກບານຄືຫຍ້າ ແລະພວກເຂົາຈະຮູ້ກັນວ່າ

ພຣະຫັດຂອງພຣະຜູ້ເປັນເຈົ້າຢູ່ກັບຜູ້ຮັບໃຊ້ຂອງພຣະອົງ
ແລະຄວາມພິໂລດຕໍ່ສູ້ສັດຕູຂອງພຣະອົງ
15 ເພາະວ່າ ເບິ່ງແມພຣະຜູ້ເປັນເຈົ້າຈະສະເດັດມາດ້ວຍໄຟ
ແລະລົດຮົບຂອງພຣະອົງຄືລົມຫົວກຸດ
ເພື່ອຕອບສະໜອງພວກເຂົາດ້ວຍຄວາມໂກດຮ້າຍຂອງພຣະອົງຢ່າງຮ້າຍແຮງ
ແລະດ້ວຍການຕິຕຽນຂອງພຣະອົງພ້ອມດ້ວຍແປວໄຟ
16 ເພາະວ່າພຣະຜູ້ເປັນເຈົ້າຈະຊົງພິພາກສາດ້ວຍໄຟ
ແລະດ້ວຍອາວຸດຂອງພຣະອົງເໜືອເນື້ອໜັງທັງໝົດ
ແລະຜູ້ທີ່ພຣະຜູ້ເປັນເຈົ້າສັງຫານໄປຈະມີຫລວງຫລາຍ

17ບັນດາຜູ້ທີ່ລ້າງຕົວ ແລະຊຳລະຕົວໃຫ້ບໍລິສຸດ ຢູ່ທາງຫລັງຕົ້ນໄມ້ຕົ້ນໜຶ່ງທ່າມກາງສວນ ທີ່ກຳລັງກິນຊີ້ນໝູແລະສິ່ງທີ່ໜ້າກຽດຊັງ ແລະໜູ ຈະເຖິງທີ່ສິ້ນສຸດນຳກັນ" ພຣະຜູ້ເປັນເຈົ້າບອກດັ່ງນີ້

18"ເພາະວ່າເຮົາຮູ້ການງານຂອງພວກເຂົາ ແລະຄວາມຄິດຂອງພວກເຂົາ ແລະເຮົາຈະມາ
ຮວບຮວມບັນດາປະຊາຊາດ ແລະພາສາທັງໝົດ ແລະພວກເຂົາຈະເຫັນສະຫງ່າລາສີຂອງເຮົາ
19ເຮົາຈະຕັ້ງໝາຍສຳຄັນໄວ້ທ່າມກາງພວກເຂົາ ແລະເຮົາຈະສົ່ງຜູ້ລອດພົ້ນຈາກພວກເຂົານັ້ນໄປ
ຍັງບັນດາປະຊາຊາດ ໄປຍັງຕາຊິດ ປູນ ແລະລູດ ຜູ້ກົ່ງທະນູ ໄປຍັງຕູບານ ແລະຢາວານ
ມາຍັງເກາະທັງຫລາຍທີ່ໄກອອກໄປ ທີ່ພວກເຂົາຍັງບໍ່ໄດ້ຍິນຊື່ສຽງຂອງເຮົາ ແລະເຫັນສະຫງ່າ
ລາສີຂອງເຮົາ ແລະເຂົາຈະປະກາດສະຫງ່າລາສີຂອງເຮົາທ່າມກາງບັນດາປະຊາຊາດ 20ພວກ
ເຂົາຈະນຳພີ່ນ້ອງທັງໝົດຂອງເຈົ້າທັງຫລາຍຈາກບັນດາປະຊາຊາດທັງໝົດເປັນເຄື່ອງຖວາຍບູ-
ຊາພຣະຜູ້ເປັນເຈົ້າມາດ້ວຍມ້າ ດ້ວຍລົດຮົບ ດ້ວຍກວຽນ ດ້ວຍລໍ້ ແລະດ້ວຍອູດໜອກດຽວ
ມາເຢຣູຊາເລັມພູເຂົາບໍລິສຸດຂອງເຮົາ" ພຣະຜູ້ເປັນເຈົ້າບອກດັ່ງນີ້ "ແບບດຽວກັນກັບຄົນອິ-
ສຣາເອນນຳເຄື່ອງບູຊາພືດຜົນເປັນເມັດໃສ່ພາຊະນະສະອາດມາຍັງພຣະວິຫານຂອງພຣະຜູ້-
ເປັນເຈົ້າ 21ແລະເຮົາຈະເອົາພວກເຂົາບາງຄົນເປັນປະໂລຫິດ ແລະເປັນພວກເລວີ" ພຣະຜູ້-
ເປັນເຈົ້າບອກດັ່ງນີ້

22 "ເພາະວ່າຟ້າສະຫວັນໃໝ່ ແລະແຜ່ນດິນໂລກໃໝ່ ຊຶ່ງເຮົາຈະສ້າງ
ຈະຍັງຢູ່ຕໍ່ໜ້າເຮົາສັນໃດ"ພຣະຜູ້ເປັນເຈົ້າບອກດັ່ງນີ້
"ເຊື້ອສາຍຂອງເຈົ້າ ແລະຊື່ຂອງເຈົ້າຈະຍັງຢູ່ສັນນັ້ນ"
23 ພຣະຜູ້ເປັນເຈົ້າບອກວ່າ "ແລະຕໍ່ມາທຸກມື້ຂຶ້ນຄ່ຳ ແລະທຸກວັນສະບາໂຕ
ເນື້ອໜັງທັງໝົດຈະມານະມັດສະການຕໍ່ໜ້າເຮົາ"

24"ແລະພວກເຂົາຈະອອກໄປເບິ່ງຊາກສົບຂອງຄົນທີ່ໄດ້ລະເມີດຕໍ່ເຮົາ ເພາະວ່າໜອນຂອງຄົນເຫລົ່ານີ້ຈະບໍ່ຕາຍໄປ ໄຟຂອງພວກເຂົາຈະບໍ່ດັບ ແລະພວກເຂົາຈະເປັນທີ່ໜ້າກຽດຊັງຕໍ່ເນື້ອໜັງທັງໝົດ"

* * *

# ເຢເຣມີຢາ

## ບົດທີ 1

[1]ຕໍ່ໄປນີ້ແມ່ນຄໍາເວົ້າ ແລະການກະທໍາຂອງ ເຢເຣມີຢາ ລູກຊາຍ ຮິນກີຢາ ຜູ້ເປັນປະໂລຫິດ
ຄົນໜຶ່ງໃນເມືອງ ອານາໂທດ ແຂວງ ເບັນຢາມິນ. [2]ພຣະຜູ້ເປັນເຈົ້າ ໄດ້ຊົງກ່າວຕໍ່ ເຢເຣມີຢາ ໃນປີ
ທີສິບສາມແຫ່ງລາຊະການ ໂຢສີຢາ ກະສັດ ຢູດາ ຜູ້ເປັນພະລາຊະ ໂອລົດຂອງກະສັດ ອາໂມນ.
[3]ຕໍ່ມາ ເມື່ອ ເຢໂຮຢາກີມ ລາຊະໂອລົດຂອງ ໂຢສີຢາ ຂຶ້ນສະເຫວີຍລາຊະສົມບັດ ພຣະຜູ້ເປັນ-
ເຈົ້າ ກໍຊົງກ່າວຕໍ່ ເຢເຣມີຢາ ອີກ ຫລັງຈາກນັ້ນເມື່ອ ເຊເດກີຢາ ລາຊະໂອລົດຂອງ ໂຢສີຢາ ຂຶ້ນສະ-
ເຫວີຍລາຊະສົມບັດ ພຣະອົງໄດ້ຊົງກ່າວຕໍ່ລາວອີກຫລາຍເທື່ອ ຈົນເຖິງຄາວປະຊາຊົນ ເຢຣູຊາ-
ເລັມ ຖືກຈັບໄປເປັນຊະເລີຍ ຊຶ່ງເປັນປີທີ່ ເຊເດກີຢາ ເປັນກະສັດມາໄດ້ສິບປີຫ້າເດືອນ.

### ພຣະຜູ້ເປັນເຈົ້າແຕ່ງຕັ້ງເຢເຣມີຢາ ເປັນຜູ້ປະກາດພຣະທຳ

[4]ພຣະຜູ້ເປັນເຈົ້າ ຊົງກ່າວຕໍ່ຂ້າພະເຈົ້າວ່າ,
[5] “ກ່ອນເຮົາໄດ້ເຮັດໃຫ້ເຈົ້າເປັນຕົວຕົນຢູ່ໃນທ້ອງແມ່
ເຮົາໄດ້ເລືອກເອົາໄວ້ແລ້ວ
ກ່ອນເຈົ້າເກີດ ເຮົາໄດ້ແຕ່ງຕັ້ງເຈົ້າເປັນຜູ້ບໍລິສຸດແລ້ວ
ແລະເຮົາໄດ້ສະຖາປະນາໃຫ້ເຈົ້າເປັນຜູ້ປະກາດພຣະທຳແກ່ນາໆຊາດ.”
[6]ແລ້ວຂ້າພະເຈົ້າໄດ້ທູນຕອບວ່າ,
“ຂ້າແດ່ ພຣະຜູ້ເປັນເຈົ້າ ຂ້ານ້ອຍບໍ່ຮູ້ວ່າຈະເວົ້າຢ່າງໃດ
ເພາະວ່າຂ້ານ້ອຍຍັງນ້ອຍ.”
[7] ແຕ່ ພຣະຜູ້ເປັນເຈົ້າ ຊົງບອກຂ້າພະເຈົ້າວ່າ,
“ຢ່າເວົ້າວ່າເຈົ້າຍັງນ້ອຍ
ເພາະວ່າເຮົາຈະໃຊ້ເຈົ້າໄປຫາປະຊາຊົນ
ແລ້ວຈຶ່ງບອກທຸກສິ່ງທີ່ເຮົາຈະສັ່ງເຈົ້າແກ່ພວກເຂົາ.
[8] ເຈົ້າຢ່າສູ່ຢ້ານຄົນເຫລົ່ານັ້ນ
ເພາະວ່າເຮົາຈະຢູ່ປົກປັກຮັກສາເຈົ້າ
ເຮົາ ພຣະຜູ້ເປັນເຈົ້າ ໄດ້ກ່າວດັ່ງນີ້ແຫລະ.”
[9] ຄັນແລ້ວພຣະຜູ້ເປັນເຈົ້າ ໄດ້ຊົງເດ່ພຣະຫັດມາໃສ່ປາກຂ້າພະເຈົ້າ
ແລະຊົງກ່າວຕໍ່ຂ້າພະເຈົ້າວ່າ,
“ເບິ່ງແມ ເຮົາໄດ້ເອົາຄຳເວົ້າຂອງເຮົາໃສ່ໃນປາກຂອງເຈົ້າແລ້ວ.
[10] ມື້ນີ້ເຮົາໃຫ້ເຈົ້າມີອຳນາດເໜືອປະຊາຊົນ
ແລະລາຊະອານາຈັກທັງຫລາຍ
ເພື່ອຖອນຮາກ ແລະຮື້ຖິ້ມເສຍ

ເພື່ອທຳລາຍ ແລະເຮັດໃຫ້ລົ້ມລົງ
ເພື່ອກໍ່ຂຶ້ນແລະປູກຝັງໄວ້.”

[11]ພຣະຜູ້ເປັນເຈົ້າຊົງຖາມຂ້າພະເຈົ້າວ່າ, “ເຢເຣມີຢາເອີຍ ເຈົ້າໄດ້ເຫັນຫຍັງ?” ຂ້າພະເຈົ້າ
ໄດ້ທູນຕອບວ່າ, “ຂ້ານ້ອຍໄດ້ເຫັນງ່າຂອງຕົ້ນໝາກບົກ.” [12]ແລ້ວພຣະຜູ້ເປັນເຈົ້າຊົງບອກຂ້າ-
ພະເຈົ້າວ່າ, “ຖືກແລ້ວ ເຮົາກຳລັງເຝົ້າບັງຄັບໃຫ້ຄຳເວົ້າຂອງເຮົາເປັນຈິງຂຶ້ນ.”

[13]ຕໍ່ມາ ພຣະຜູ້ເປັນເຈົ້າຊົງຖາມຂ້າພະເຈົ້າອີກວ່າ, “ເຈົ້າໄດ້ເຫັນຫຍັງອີກບໍ?” ຂ້າພະເຈົ້າໄດ້
ທູນຕອບວ່າ, “ຂ້ານ້ອຍໄດ້ເຫັນໝໍ້ໜ່ວຍໜຶ່ງຢູ່ທາງທິດເໜືອ ມັນກຳລັງຟົດ ແລະປາກໝໍ້ນັ້ນປິ່ນ
ມາທາງພີ້.” [14]ແລ້ວພຣະອົງຊົງກ່າວຕໍ່ຂ້າພະເຈົ້າວ່າ, “ເຫດຮ້າຍຈະເກີດຂຶ້ນທາງທິດເໜືອ ແລ້ວ
ຈະລຸກລາມເຜົາຜານຄົນທັງປວງທີ່ອາໄສຢູ່ໃນແຜ່ນດິນນີ້. [15]ຈົ່ງຟັງສິ່ງທີ່ເຮົາກ່າວ ຄືເຮົາຈະເອີ້ນ
ຊົນຊາດທີ່ຢູ່ທາງທິດເໜືອນັ້ນມາໝົດ ກະສັດທັງຫລາຍຂອງພວກເຂົາກໍຈະມາ ກະສັດແຕ່ລະອົງ
ຈະຕັ້ງກອງທັບບັນຊາການຂອງຕົນໄວ້ຕໍ່ໜ້າປະຕູນະຄອນເຢຣູຊາເລັມ ຕິດກັບກຳແພງ ແລະຕໍ່-
ໜ້າປະຕູຫົວເມືອງອື່ນໆ ໃນລາຊະອານາຈັກຢູດາ. [16]ເຮົາຈະລົງໂທດຄົນທັງຫລາຍດ້ວຍວ່າ
ພວກເຂົາໄດ້ເຮັດບາບຄື ໄດ້ປະຖິ້ມເຮົາ ໄດ້ເຜົາເຄື່ອງຫອມບູຊາຖວາຍແກ່ພະອື່ນ ແລະໄດ້ສ້າງ
ຮູບເຄົາລົບທີ່ພວກເຂົາເອງສ້າງຂຶ້ນ.

[17]ເຈົ້າຈົ່ງກ້າຫານ ແລະຈົ່ງໄປບອກທຸກໆ ສິ່ງທີ່ເຮົາສັ່ງເຈົ້ານັ້ນແກ່ພວກເຂົາ ບັດນີ້ ເຈົ້າຢ່າສູ່
ຢ້ານພວກເຂົາ ບໍ່ດັ່ງນັ້ນ ເຮົາຈະເຮັດໃຫ້ເຈົ້າຢ້ານພວກເຂົາຫລາຍຂຶ້ນເມື່ອເຈົ້າຢູ່ນຳພວກເຂົາ.
[18]ຈົ່ງຟັງ ເຢເຣມີຢາ ຄືທຸກໆ ຄົນໃນປະເທດນີ້ ທັງກະສັດຂອງຊາວຢູດາ ຂ້າລາຊະການ
ປະໂລຫິດ ແລະປະຊາຊົນທັງປວງຈະຕໍ່ສູ້ເຈົ້າ ແຕ່ມື້ນີ້ ເຮົາຈະເຮັດໃຫ້ເຈົ້າສາມາດຕໍ່ສູ້ຂັດຂວາງ
ພວກເຂົາໄດ້ ເຈົ້າຈະເປັນເໝືອນນະຄອນທີ່ມີການປ້ອງກັນຢ່າງດີ ຈະເປັນເໝືອນເສົາເຫລັກ
ແລະກຳແພງທອງເຫລືອງ. [19]ພວກເຂົາຈະບໍ່ຊະນະເຈົ້າ ເພາະວ່າເຮົາຈະຢູ່ປົກປັກຮັກສາເຈົ້າ
ເຮົາພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ແຫລະ.”

# ບົດທີ 2

## ການບໍ່ເຊື່ອຟັງຂອງຊາວອິສຣາເອນ

[1]ພຣະຜູ້ເປັນເຈົ້າຊົງບອກໃຫ້ຂ້າພະເຈົ້າໄປຍັງນະຄອນເຢຣູຊາເລັມ ເພື່ອບອກຖ້ອຍຄຳຂອງ
ພຣະອົງແກ່ຄົນທັງປວງວ່າ,

[2] “ເຮົາລະນຶກເຖິງຄວາມສັດຊື່ຄາວເມື່ອເຈົ້າຍັງໜຸ່ມ
ລະນຶກເຖິງຄວາມຮັກທີ່ເຈົ້າມີຕໍ່ເຮົາຄາວມື້ແຕ່ງງານ
ພວກເຈົ້າຕິດຕາມເຮົາໄປທົ່ວຖິ່ນແຫ້ງແລ້ງກັນດານ
ຄືພູມີປະເທດທີ່ບໍ່ໄດ້ປູກຝັງ.
[3] ຊາວອິສຣາເອນເອີຍ! ໃນເວລານັ້ນພວກເຈົ້າເປັນຂອງເຮົາທັງໝົດ
ເປັນໝາກຜົນອັນດີທີ່ສຸດຈາກການເກັບກ່ຽວຂອງເຮົາ
ເຮົາເຮັດໃຫ້ທຸກຄົນທີ່ທຳຮ້າຍເຈົ້າໄດ້ຮັບຄວາມເດືອດຮ້ອນ

ແລະໃຫ້ພວກເຂົາໄດ້ຮັບຄວາມທຸກຍາກລຳບາກ
ເຮົາ ພຣະຜູ້ເປັນເຈົ້າ ໄດ້ກ່າວດັ່ງນີ້ແຫລະ.”

## ບາບຂອງບັນພະບູລຸດຊາວອິສຣາເອນ

4 ເຊື້ອສາຍຂອງ ຢາໂຄບ ແລະບັນດາຄອບຄົວ ອິສຣາເອນ ເອີຍ
ຈົ່ງຟັງຖ້ອຍຄຳຂອງ ພຣະຜູ້ເປັນເຈົ້າ ເທີ້ນ.
5 ພຣະຜູ້ເປັນເຈົ້າ ຊົງກ່າວວ່າ,
ບັນພະບູລຸດຂອງພວກເຈົ້າເຫັນວ່າເຮົາໄດ້ເຮັດຜິດຫຍັງ
ຈຶ່ງໄດ້ພາກັນໜີຈາກໄປ?
ພວກເຂົາໄດ້ນັບຖືຮູບອັນບໍ່ມີປະໂຫຍດ
ຈຶ່ງກາຍເປັນຄົນທີ່ບໍ່ມີປະໂຫຍດ.
6 ເຖິງແມ່ນວ່າເຮົາໄດ້ຊ່ອຍພວກເຂົາໃຫ້ອອກຈາກປະເທດ ເອຢິບ
ໄດ້ນຳພາພວກເຂົາຜ່ານຖິ່ນແຫ້ງແລ້ງກັນດານ
ຜ່ານປະເທດທີ່ມີພູ ແລະເຫວ
ຜ່ານປະເທດທີ່ແຫ້ງແລ້ງແລະມີອັນຕະລາຍ
ໃນບ່ອນທີ່ບໍ່ມີຄົນຜ່ານໄປ ແລະອາໄສຢູ່
ພວກເຂົາກໍບໍ່ໄດ້ເອົາໃຈໃສ່ໃນເຮົາ.
7 ເຮົາໄດ້ນຳພວກເຂົາເຂົ້າໄປຢູ່ໃນດິນແດນທີ່ອຸດົມສົມບູນ
ເພື່ອກິນຜົນລະປູກ ແລະສິ່ງອື່ນໆ ໃນແຜ່ນດິນນັ້ນ
ແຕ່ພວກເຂົາໄດ້ເຂົ້າມາສໍ້ໂກງແຜ່ນດິນຂອງເຮົາ
ໄດ້ເຮັດໃຫ້ແຜ່ນດິນທີ່ເຮົາຍົກໃຫ້ພວກເຂົາເສື່ອມເສຍໄປ.
8 ພວກປະໂລຫິດບໍ່ໄດ້ສົນໃຈໃນ ພຣະຜູ້ເປັນເຈົ້າ
ພວກນັກທຳກໍບໍ່ຮູ້ຈັກເຮົາ
ຜູ້ປົກຄອງກໍເປັນກະບົດຕໍ່ສູ້ເຮົາ
ຜູ້ປະກາດພຣະທຳກໍປະກາດໃນນາມຂອງ ພະບາອານ
ແລະໄດ້ຂາບໄຫວ້ຮູບພະທີ່ຊ່ອຍຫຍັງບໍ່ໄດ້.

## ພຣະຜູ້ເປັນເຈົ້າຊົງພິພາກສາໂທດໄພ່ພົນຂອງພຣະອົງ

9 ດ້ວຍເຫດນີ້ ເຮົາ ພຣະຜູ້ເປັນເຈົ້າ ຈຶ່ງຈະນຳຄະດີມາຕໍ່ສູ້
ໄພ່ພົນຂອງເຮົາອີກ
ແລະມາຕໍ່ສູ້ພວກຫລານເຫລັນຂອງພວກເຂົາດ້ວຍ.
10 ຈົ່ງໄປທາງຕາເວັນຕົກເກາະ ກິດຕີມ
ໃຫ້ສົ່ງຄົນໄປທາງຕາເວັນອອກເຖິງ ເມືອງ ເກດາ
ແລ້ວພິຈາລະນາເບິ່ງຄັກໆ
ວ່າເຄີຍມີຫຍັງເກີດຂຶ້ນເໝືອນສິ່ງນີ້ຫລືບໍ່?

11 ໃນໂລກນີ້ມີຊາດໃດແດ່ເຄີຍປະພະຂອງຕົນ
ເຖິງແມ່ນວ່າພະເຫລົ່ານັ້ນບໍ່ແມ່ນພະແທ້ກໍດີ?
ແຕ່ໄພ່ພົນຂອງເຮົາໄດ້ປະເຮົາແລ້ວ
ຄືປະພຣະເຈົ້າອົງນຳກຽດມາໃຫ້ພວກເຂົາ
ໄປຫາພະທີ່ຊ່ອຍເຫລືອຫຍັງບໍ່ໄດ້.
12 ດັ່ງນັ້ນ ເຮົາພຣະຜູ້ເປັນເຈົ້າຈຶ່ງສັ່ງໃຫ້ທ້ອງຟ້າຫວັ່ນໄຫວຢ່າງຮຸນແຮງ
ເພື່ອໃຫ້ຄົນເກີດການອັດສະຈັນ ແລະຕື່ນຕົກໃຈ.
13 ໄພ່ພົນຂອງເຮົາໄດ້ເຮັດບາບສອງຢ່າງ ຄື
ໄດ້ປະຖິ້ມເຮົາຜູ້ເປັນນໍ້າບໍ່ທີ່ມີຊີວິດ
ແລະໄດ້ຂຸດນໍ້າສ້າງສຳລັບຕົນເອງ
ແຕ່ສ້າງນັ້ນບໍ່ມີນໍ້າ.”

## ຜົນແຫ່ງຄວາມບໍ່ເຊື່ອຟັງຂອງຊາວອິສຣາເອນ

14 “ຊາວອິສຣາເອນບໍ່ໄດ້ເປັນຂ້າທາດ ບໍ່ໄດ້ເກີດມາເປັນຂ້າທາດ
ຖ້າຢ່າງນັ້ນ ເປັນຫຍັງສັດຕູຈຶ່ງຕາມລ່າຈັບພວກເຂົາ?
15 ສັດຕູໄດ້ຮ້ອງແຜດສຽງໃສ່ພວກເຂົາເໝືອນດັ່ງສິງ
ພວກເຂົາໄດ້ແຜດສຽງໃສ່ຢ່າງຮຸນແຮງ
ແລະໄດ້ເຮັດໃຫ້ແຜ່ນດິນອິສຣາເອນເປັນຖິ່ນແຫ້ງແລ້ງກັນດານ
ຫົວເມືອງຂອງພວກເຂົາກໍຖືກທຳລາຍ ແລະບໍ່ມີຄົນອາໄສຢູ່.
16 ຍິ່ງໄປກວ່ານີ້ ຊາວເມືອງເມັມຟິດ ແລະເມືອງຕະປັນເຂດ
ຍັງໄດ້ທຸບຕີຫົວຂອງຊາວອິສຣາເອນແຕກ.
17 ອິສຣາເອນເອີຍ ພວກເຈົ້າໄດ້ນຳສິ່ງນີ້ມາໃສ່ພວກເຈົ້າເອງ
ໃນຂະນະທີ່ເຮົາພາເຈົ້າໄປຕາມທາງ
ເຈົ້າໄດ້ປະຖິ້ມເຮົາ ຄືພຣະຜູ້ເປັນເຈົ້າຂອງເຈົ້າ.
18 ບັດນີ້ ເຈົ້າຫວັງປະໂຫຍດອັນໃດທີ່ຈະໄປປະເທດເອຢິບ
ຫວັງຈະດື່ມນໍ້າໃນແມ່ນໍ້ານິນບໍ?
ຫວັງປະໂຫຍດອັນໃດທີ່ຈະໄປປະເທດອັດຊີເຣຍ
ຫວັງຈະດື່ມນໍ້າໃນແມ່ນໍ້າເອຟຣາດບໍ?
19 ພວກເຈົ້າຈະຖືກໂທດຍ້ອນຄວາມຊົ່ວຊ້າຂອງເຈົ້າເອງ
ແລະຍ້ອນປະຖິ້ມເຮົາ
ທີ່ພວກເຈົ້າປະຖິ້ມພຣະຜູ້ເປັນເຈົ້າ ແລະບໍ່ຢ້ານກົວເຮົາອີກຕໍ່ໄປນັ້ນ
ພວກເຈົ້າຈະຮູ້ດອກວ່າມັນຂົມຂື່ນ ແລະຊົ່ວຮ້າຍພຽງໃດ
ເຮົາພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ແຫລະ.”

## ຊາວອິສຣາເອນບໍ່ຍອມຂາບໄຫວ້ພຣະຜູ້ເປັນເຈົ້າ

20 “ອິສຣາເອນ ເອີຍ! ເຫິງນານແລ້ວທີ່ເຈົ້າບໍ່ຍອມຢູ່ໃຕ້ອຳນາດຂອງເຮົາ
ບໍ່ຍອມເຊື່ອຟັງເຮົາ ແລະເວົ້າວ່າ ຂ້າພະເຈົ້າຈະບໍ່ຮັບໃຊ້ພຣະອົງ
ແຕ່ຢູ່ເທິງພູ ແລະກ້ອງຕົ້ນໄມ້ບ່ອນສັກສິດ
ພວກເຈົ້າໄດ້ເຮັດປະໝາດເໝືອນຍິງໂສເພນີ.
21 ເຮົາໄດ້ປູກເຈົ້າໄວ້ເໝືອນກັບຕົ້ນອະງຸ່ນພັນດີ
ເໝືອນແນວພືດຢ່າງດີທີ່ສຸດ
ແຕ່ແລ້ວເປັນຫຍັງເຈົ້າຈຶ່ງກາຍເປັນເໝືອນອະງຸ່ນພັນບໍ່ດີ
ທີ່ເຮົາບໍ່ສົນໃຈອີກຕໍ່ໄປແລ້ວ.
22 ເຖິງແມ່ນເຈົ້າຈະລ້າງຕົວຂອງເຈົ້າດ້ວຍນໍ້າຢາ ແລະໃສ່ສະບູຫລາຍໆ
ເຮົາກໍຍັງເຫັນຄວາມເປິເປື້ອນອັນເນື່ອງມາຈາກບາບຂອງເຈົ້າຢູ່
ເຮົາພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ແຫລະ.
23 ເຈົ້າຈະເວົ້າໄດ້ຢ່າງໃດວ່າບໍ່ໄດ້ເຮັດຜິດ
ແລະເວົ້າວ່າບໍ່ເຄີຍຂາບໄຫວ້ພະບາອານ
ຈົ່ງຄິດເບິ່ງດູວ່າ ເຈົ້າໄດ້ເຮັດບາບໃນຮ່ອມພູຢ່າງໃດແດ່
ຈົ່ງສຳນຶກໃນສິ່ງທີ່ໄດ້ເຮັດນັ້ນ
ເຈົ້າເປັນເໝືອນອູດແມ່ທີ່ກຳລັງຄຶກຄະນອງ
ທີ່ປ່ອຍໃຫ້ມັນໄປໄດ້ຕາມໃຈ.
24 ເຈົ້າເປັນເໝືອນລໍແມ່ທີ່ແລ່ນຖືເຊິງຢູ່ໃນຖິ່ນແຫ້ງແລ້ງກັນດານ
ເມື່ອມັນຢາກຖືເຊິງຢ່າງຮຸນແຮງ ໃຜຈະບັງຄັບມັນໄດ້
ລໍເຖິກກໍປະສົມກັບມັນໄດ້ງ່າຍ
ລໍແມ່ຈະປະກົດໃຫ້ເຫັນເລື້ອຍໆໃນລະດູຕິດເຊິງ.
25 ອິສຣາເອນ ເອີຍ ຢ່າແລ່ນຈົນເກີບເຣ່ຍ ແລະຄໍແຫ້ງ
ແຕ່ເຈົ້າໄດ້ເວົ້າວ່າ ບໍ່ເປັນຫຍັງດອກ
ຂ້າພະເຈົ້າຍິນດີນັບຖືພະຕ່າງປະເທດ ແລະຈະຕິດຕາມໄປ.”

## ຊາວອິສຣາເອນສົມຄວນໄດ້ຮັບໂທດ

26 “ຂີ້ລັກນັ້ນເມື່ອຖືກຈັບຍ່ອມລະອາຍສັນໃດ
ພວກເຈົ້າປະຊາຊົນອິສຣາເອນທັງໝົດ
ຮ່ວມທັງກະສັດ ເຈົ້ານາຍ ປະໂລຫິດ ແລະຜູ້ປະກາດພຣະທຳ
ກໍຈະລະອາຍສັນນັ້ນ.
27 ພວກເຈົ້າຈະລະອາຍທີ່ເວົ້າກັບຕົ້ນໄມ້ວ່າ
ອາດຍາເປັນພໍ່ຂອງຂ້ານ້ອຍ
ແລະເວົ້າກັບກ້ອນຫີນວ່າ ອາດຍາເປັນແມ່ຂອງຂ້ານ້ອຍ

ເລື່ອງນີ້ຈະເກີດຂຶ້ນຍ້ອນເຈົ້າປະຖິ້ມເຮົາ ແລະບໍ່ຕ່າວມາຫາເຮົາ
ແຕ່ເມື່ອເຈົ້າຕົກທຸກໄດ້ຍາກ
ເຈົ້າຈະຮ້ອງຂໍໃຫ້ເຮົາມາຊ່ອຍ.
28 ພະທີ່ເຈົ້າເຮັດຂຶ້ນສຳລັບຕົວເອງນັ້ນຢູ່ໃສ?
ເມື່ອຕົກທຸກໄດ້ຍາກ ຈົ່ງໃຫ້ມັນຊ່ອຍຕີ້ ຖ້າວ່າຈະຊ່ອຍໄດ້
ຊາວຢູດາ ເອີຍ ພວກເຈົ້ານັ້ນມີພະຫລາຍທໍ່ກັບມີເມືອງ.
29 ເຮົາພຣະຜູ້ເປັນເຈົ້າຂໍຖາມວ່າ ເປັນຫຍັງເຈົ້າຈຶ່ງຮ້ອງທຸກຕໍ່ເຮົາ
ພວກເຈົ້າທັງໝົດໄດ້ກະບົດຕໍ່ສູ້ເຮົາ.
30 ເຮົາໄດ້ລົງໂທດເຈົ້າ ແຕ່ພວກເຈົ້າບໍ່ຫລາບ
ເຈົ້າບໍ່ຍອມຮັບເອົາການດັດສັນດານນັ້ນ
ແລະໄດ້ຂ້າຜູ້ປະກາດພຣະທຳຂອງຕົນເໝືອນສິງໂຕຮ້າຍກາດ.
31 ພວກເຈົ້າທັງໝົດຈົ່ງຕັ້ງໃຈຟັງສິ່ງທີ່ເຮົາຈະເວົ້າ
ຊາວອິສຣາເອນ ເອີຍ ເຮົາເປັນເໝືອນຖິ່ນແຫ້ງແລ້ງກັນດານ
ແລະເໝືອນກັບແຜ່ນດິນທີ່ເປັນອັນຕະລາຍຕໍ່ພວກເຈົ້າບໍ?
ໄພ່ພົນຂອງເຮົາເອີຍ ເປັນຫຍັງພວກເຈົ້າຈຶ່ງເວົ້າວ່າ
ຈະເຮັດຕາມໃຈຂອງຕົນ ແລະຈະບໍ່ມາຫາເຮົາອີກຕໍ່ໄປ?
32 ຍິງສາວຈະລືມເຄື່ອງເອ້ຂອງຕົນໄດ້ບໍ?
ແລະເຈົ້າສາວຈະລືມເຄື່ອງແຕ່ງຕົວໃນງານສົມລົດໄດ້ບໍ?
ແຕ່ໄພ່ພົນຂອງເຮົາໄດ້ລືມເຮົາເປັນເວລາດົນນານແລ້ວ.
33 ເຈົ້າຮູ້ຈັກວິທີຍົວະເຍົ້າໃຫ້ຄົນມາຫລົງຮັກ
ແມ່ນແຕ່ແມ່ຈ້າງກໍຍັງຮຽນນຳເຈົ້າ.
34-35 ເສື້ອຂອງເຈົ້າໄດ້ເປິເປື້ອນດ້ວຍເລືອດຂອງຄົນທຸກຍາກ
ທີ່ບໍ່ມີຄວາມຜິດ
ແລະເລືອດຂອງຄົນທີ່ບໍ່ເຄີຍລັກຂອງໃນເຮືອນເຈົ້າ
ແຕ່ທັງໆ ທີ່ເປັນດັ່ງນີ້ ພວກເຈົ້າກໍຍັງເວົ້າວ່າ ຕົນບໍ່ມີຄວາມຜິດ
ແລະວ່າພຣະຜູ້ເປັນເຈົ້າບໍ່ຄຽດຮ້າຍເຈົ້າອີກຕໍ່ໄປ
ເຮົາພຣະຜູ້ເປັນເຈົ້າຈະລົງໂທດເຈົ້າ
ຍ້ອນເຈົ້າເວົ້າວ່າບໍ່ໄດ້ເຮັດບາບ.
36 ດ້ວຍເຫດໃດ ເຈົ້າຈຶ່ງປ່ຽນເສັ້ນທາງຢ່າງງ່າຍດາຍ
ເຈົ້າຈະຜິດຫວັງຍ້ອນປະເທດ ເອຢິບ
ເໝືອນເຄີຍຜິດຫວັງຍ້ອນປະເທດ ອັດຊີເຣຍ ມາແລ້ວ.
37 ເຈົ້າຈະໄດ້ອອກໄປຈາກ ເອຢິບ ດ້ວຍ
ຈະລະອາຍຄົນທັງຫລາຍຈົນເບິ່ງໜ້າໃຜບໍ່ໄດ້

ເພາະພຣະຜູ້ເປັນເຈົ້າຊົງປະຖິ້ມບັນດາຄວາມໄວ້ວາງໃຈຂອງເຈົ້າ
ເຈົ້າຈະຈະເລີນຂຶ້ນມາເພາະພວກເຂົາກໍບໍ່ໄດ້.”

# ບົດທີ 3

1“ພວກເຂົາກ່າວວ່າ ‘ຖ້າຊາຍຄົນໃດປະຮ້າງເມຍຂອງຕົນ ແລະນາງກໍໄປຈາກລາວເສຍ
ແລະໄປເປັນເມຍຂອງຊາຍອີກຄົນໜຶ່ງ ລາວຈະກັບໄປຫານາງບໍ ແຜ່ນດິນນັ້ນຈະບໍ່ເປິເປື້ອນ
ຫລວງຫລາຍບໍ’ ແຕ່ເຈົ້າໄດ້ຫລິ້ນຊູ້ກັບຄົນຮັກຫລວງຫລາຍແລ້ວ ເຖິງປານນັ້ນ ເຈົ້າຈົ່ງກັບມາ
ຫາເຮົາ” ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ 2“ຈົ່ງແຫງນໜ້າຂຶ້ນສູ່ບັນດາບ່ອນທີ່ສູງນັ້ນ ແລະ
ເບິ່ງແມ ບ່ອນໃດແດ່ທີ່ບໍ່ມີຄົນມານອນນຳເຈົ້າ ເຈົ້າໄດ້ນັ່ງຄອຍຖ້າຄົນຮັກຂອງເຈົ້າຢູ່ທີ່ຮີມທາງ
ເໝືອນຄົນອາຫລັບໃນຖິ່ນແຫ້ງແລ້ງກັນດານ ເຈົ້າໄດ້ເຮັດໃຫ້ແຜ່ນດິນເປິເປື້ອນດ້ວຍການແພດ
ສະຍາ ແລະຄວາມຊົ່ວຊ້າຂອງເຈົ້າ 3ເພາະສະນັ້ນ ຝົນຈຶ່ງໄດ້ລະງັບເສຍ ແລະຝົນປາຍລະດູຈຶ່ງ
ຂາດໄປ ແຕ່ເຈົ້າມີໜ້າຜາກຂອງຍິງບໍ່ສັດຊື່ ເຈົ້າປະຕິເສດບໍ່ຍອມອັບອາຍ 4ຕັ້ງແຕ່ເວລານີ້ ເຈົ້າ
ຈະຮຽກຮ້ອງເຮົາບໍ່ແມ່ນບໍວ່າ ‘ພຣະບິດາຂອງຂ້າພະອົງ ພຣະອົງຊົງເປັນຜູ້ແນະນຳຕັ້ງແຕ່ຂ້າ-
ພະອົງຍັງສາວໆ 5ພຣະອົງຈະຊົງພຣະພິໂລດຢູ່ເປັນນິດບໍ ພຣະອົງຈະຊົງໂກດຮ້າຍຢູ່ຈົນເຖິງທີ່
ສຸດປາຍບໍ’ ເບິ່ງແມ ເຈົ້າອອກຄຳເວົ້າແລ້ວ ແຕ່ເຈົ້າກໍຍັງເຮັດຄວາມຊົ່ວຊ້າທຸກຢ່າງເໝືອນກັບທີ່
ເຈົ້າໄດ້ເຮັດມາແລ້ວ”

## ພຣະເຈົ້າຊົງອ້ອນວອນກັບອິສຣາເອນຜູ້ບໍ່ສັດຊື່

6ພຣະຜູ້ເປັນເຈົ້າກ່າວກັບຂ້າພະເຈົ້າໃນລາຊະການຂອງກະສັດໂຢສີຢາວ່າ “ນາງເຮັດຫຍັງ
ເຈົ້າເຫັນຫລືບໍ່ ຄືອິສຣາເອນຜູ້ບໍ່ສັດຊື່ ນາງຂຶ້ນໄປເທິງພູເຂົາສູງທຸກໜ່ວຍ ແລະກ້ອງຕົ້ນໄມ້
ຂຽວສົດທຸກຕົ້ນ ແລ້ວໄປຫລິ້ນຊູ້ຢູ່ບ່ອນນັ້ນ 7ເມື່ອນາງເຮັດເຊັ່ນນີ້ຈົນໝົດແລ້ວ ເຮົາກ່າວວ່າ
‘ເຈົ້າຈົ່ງກັບມາຫາເຮົາ’ ແຕ່ນາງກໍບໍ່ກັບມາ ແລະຢູດານ້ອງສາວທີ່ທໍລະຍົດນັ້ນກໍເຫັນ 8ແລະເຮົາ
ເຫັນວ່າ ເພາະເຫດທັງປວງທີ່ອິສຣາເອນຜູ້ບໍ່ສັດຊື່ໄດ້ລ່ວງປະເວນີນັ້ນ ເຮົາໄດ້ໄລ່ນາງໄປພ້ອມ
ກັບໃຫ້ໜັງສືຢ່າຮ້າງ ແຕ່ຢູດານ້ອງສາວທີ່ທໍລະຍົດນັ້ນກໍບໍ່ຢ້ານກົວເລີຍ ນາງກໍກັບໄປຫລິ້ນຊູ້
ດ້ວຍ 9ຕໍ່ມາເພາະການແພດສະຍາເປັນການເບົາແກ່ນາງຫລາຍ ນາງກໍເຮັດໃຫ້ແຜ່ນດິນເປິ-
ເປື້ອນໄປ ໂດຍໄປລ່ວງປະເວນີກັບສີລາກັບລຳຕົ້ນໄມ້ 10ເຖິງວ່ານາງເຮັດໄປທັງໝົດເຊັ່ນນີ້ແລ້ວ
ຢູດານ້ອງສາວທີ່ທໍລະຍົດຂອງນາງກໍບໍ່ໄດ້ຖອຍຫລັງກັບມາຫາເຮົາດ້ວຍສິ້ນສຸດໃຈ ແຕ່ທຳທ່າ
ເຮັດເປັນກັບມາ” ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ 11ແລ້ວພຣະຜູ້ເປັນເຈົ້າກ່າວກັບຂ້າພະເຈົ້າ
ວ່າ “ອິສຣາເອນຜູ້ບໍ່ສັດຊື່ຍັງສະແດງຕົວວ່າມີຄວາມຜິດໜ້ອຍກວ່າຢູດາທີ່ທໍລະຍົດ

12ຈົ່ງໄປປະກາດຖ້ອຍຄຳເຫລົ່ານີ້ໄປທາງເໜືອກ່າວວ່າ ‘ພຣະຜູ້ເປັນເຈົ້າກ່າວວ່າ ອິສຣາເອນ
ຜູ້ບໍ່ສັດຊື່ເອີຍ ກັບມາເຖີດ ເຮົາຈະບໍ່ໃຫ້ຄວາມຮ້າຍຂອງເຮົາສວມທັບເຈົ້າ ເພາະເຮົາປະກອບ
ດ້ວຍພຣະກະລຸນາ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ ເຮົາຈະບໍ່ຮ້າຍເປັນນິດ 13ພຽງແຕ່ຍອມຮັບ
ຄວາມຊົ່ວຊ້າຂອງເຈົ້າວ່າ ເຈົ້າໄດ້ລະເມີດຕໍ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງເຈົ້າ ແລະຫຼຽວເອົາ-
ໃຈພະອື່ນທີ່ຢູ່ກ້ອງຕົ້ນໄມ້ຂຽວສົດທຸກຕົ້ນ ແລະເຈົ້າບໍ່ໄດ້ເຊື່ອຟັງສຽງຂອງເຮົາ’” ພຣະຜູ້ເປັນເຈົ້າ

ກ່າວດັ່ງນີ້ແຫລະ
14ພຣະຜູ້ເປັນເຈົ້າກ່າວວ່າ "ລູກຫລານທີ່ບໍ່ສັດຊື່ເອີຍ ກັບມາເຖີດ ເພາະເຮົາແຕ່ງງານກັບ
ເຈົ້າແລ້ວ ເຮົາຈະຮັບເຈົ້າຈາກເມືອງລະຄົນ ແລະຈາກຄອບຄົວລະສອງຄົນ ແລະເຮົາຈະນຳເຈົ້າ
ມາເຖິງຊີໂອນ 15ເຮົາຈະໃຫ້ຜູ້ລ້ຽງແກະຄົນທີ່ພໍໃຈເຮົາແກ່ເຈົ້າ ຜູ້ຊຶ່ງຈະລ້ຽງເຈົ້າດ້ວຍຄວາມຮູ້
ແລະຄວາມເຂົ້າໃຈ 16ຕໍ່ມາເມື່ອເຈົ້າທະວີ ແລະເພີ່ມຂຶ້ນໃນແຜ່ນດິນນັ້ນ" ພຣະຜູ້ເປັນເຈົ້າກ່າວ
ວ່າ "ພວກເຂົາທັງຫລາຍຈະບໍ່ກ່າວອີກວ່າ 'ຫີບຄຳໝັ້ນສັນຍາແຫ່ງພຣະຜູ້ເປັນເຈົ້າ' ເລື່ອງນີ້ຈະ
ບໍ່ມີຂຶ້ນໃນໃຈ ບໍ່ມີໃຜລະນຶກເຖິງ ບໍ່ມີໃຜນຶກເຖິງ ຈະບໍ່ເຮັດອີກເລີຍ 17ໃນເທື່ອນັ້ນ ພວກເຂົາຈະ
ເອີ້ນກຸງເຢຣູຊາເລັມວ່າ ເປັນພຣະທີ່ນັ່ງຂອງພຣະຜູ້ເປັນເຈົ້າ ແລະບັນດາປະຊາຊາດຈະຮວບ-
ຮວມກັນເຂົ້າມາຫາພຣະນາມຂອງພຣະຜູ້ເປັນເຈົ້າໃນກຸງເຢຣູຊາເລັມ ແລະຈະບໍ່ຕິດຕາມໃຈອັນ
ຊົ່ວຂອງຕົນ ແລະແຂງກະດ້າງອີກຕໍ່ໄປ 18ໃນສະໄໝນັ້ນ ເຊື້ອສາຍຂອງຢູດາຈະຍ່າງມາກັບ
ເຊື້ອສາຍຂອງອິສຣາເອນ ພວກເຂົາທັງສອງຈະຮ່ວມກັນມາຈາກແຜ່ນດິນຝ່າຍເໜືອ ມາຍັງ
ແຜ່ນດິນຊຶ່ງເຮົາມອບໃຫ້ແກ່ບັນພະບູລຸດຂອງເຈົ້າໃຫ້ເປັນມໍລະດົກ
19ແຕ່ເຮົາກ່າວວ່າ 'ເຮົາຈະຕັ້ງເຈົ້າໄວ້ທ່າມກາງບຸດທັງຫລາຍຂອງເຮົາຢ່າງໃດດີ ແລະໃຫ້
ແຜ່ນດິນທີ່ປາດຖະໜາແກ່ເຈົ້າ ເປັນມໍລະດົກທີ່ສວຍງາມທີ່ສຸດໃນບັນດາປະຊາຊາດ' ແລະເຮົາ
ກ່າວວ່າ 'ເຈົ້າຈະເອີ້ນເຮົາວ່າ ພຣະບິດາຂອງຂ້າພະອົງ ແລະຈະບໍ່ຖອຍຫລັງກັບຈາກການຕິດ-
ຕາມເຮົາ'"

## ການສາລະພາບຄວາມຜິດບາບ

20ພຣະຜູ້ເປັນເຈົ້າກ່າວວ່າ "ເຊື້ອສາຍອິສຣາເອນເອີຍ ແນ່ນອນ ເມຍທໍລະຍົດຖິ້ມຜົວຂອງ
ນາງສັນໃດ ເຈົ້າກໍໄດ້ທໍລະຍົດຕໍ່ເຮົາສັນນັ້ນ" 21ພວກເຂົາໄດ້ຍິນສຽງມາຈາກບ່ອນສູງ ເປັນສຽງ
ຮ້ອງໄຫ້ ແລະສຽງອ້ອນວອນຂອງບຸດທັງຫລາຍຂອງອິສຣາເອນ ເພາະພວກເຂົາໄດ້ເຮັດໃຫ້-
ການດຳເນີນຊີວິດຂອງຕົນເສຍແລ້ວ ພວກເຂົາໄດ້ລືມພຣະຜູ້ເປັນເຈົ້າພຣະເຈົ້າຂອງຕົນເສຍ
22 "ບັນດາບຸດທີ່ບໍ່ສັດຊື່ເອີຍ ຈົ່ງກັບມາເຖີດ
ເຮົາຈະຮັກສາຄວາມບໍ່ສັດຊື່ຂອງເຈົ້າໃຫ້ຫາຍດີ"
"ເບິ່ງແມ ຂ້າພະອົງທັງຫລາຍມາຫາພຣະອົງແລ້ວ
ເພາະພຣະອົງຊົງເປັນພຣະຜູ້ເປັນເຈົ້າພຣະເຈົ້າຂອງຂ້າພະອົງ
23 ແທ້ຈິງຄວາມຫວັງໃຈວ່າຈະໄດ້ຄວາມພົ້ນຈາກໂນນພູ
ແລະຈາກພູເຂົາຫລາຍໜ່ວຍກໍເປັນການບໍ່ມີປະໂຫຍດ
ແທ້ຈິງຄວາມພົ້ນຂອງອິສຣາເອນນັ້ນ
ຢູ່ໃນພຣະຜູ້ເປັນເຈົ້າພຣະເຈົ້າຂອງເຮົາ
24 ແຕ່ວ່າສິ່ງທີ່ໜ້າອັບອາຍນັ້ນໄດ້ກັດກິນສິ່ງທັງປວງທີ່ບັນພະບູລຸດຂອງເຮົາ
ໄດ້ລົງແຮງເຮັດໄວ້ຕັ້ງແຕ່ເຮົາຍັງເປັນເດັກນ້ອຍຢູ່
ຄືຝູງແກະ ຝູງງົວ ລູກຊາຍ
ແລະບຸດສາວທັງຫລາຍຂອງພວກເຂົາ

25 ໃຫ້ເຮົານອນລົງຈົມໃນຄວາມອັບອາຍຂອງເຮົາ ແລະໃຫ້ຄວາມອັບອາຍຄຸມເຮົາໄວ້
ເພາະເຮົາໄດ້ເຮັດບາບຕໍ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງເຮົາ
ທັງຕົວເຮົາ ແລະບັນພະບູລຸດຂອງເຮົາ ຕັ້ງແຕ່ເຮົາເປັນໜຸ່ມຢູ່ຈົນທຸກມື້ນີ້

# ບົດທີ 4

## ພຣະຜູ້ເປັນເຈົ້າຊົງເອີ້ນໃຫ້ປ່ຽນໃຈໃໝ່

1 ພຣະຜູ້ເປັນເຈົ້າຊົງກ່າວວ່າ,
"ປະຊາຊົນອິສຣາເອນເອີຍ ຖ້າພວກເຈົ້າຢາກຈະກັບຄືນມາ
ກໍຈົ່ງກັບມາຫາເຮົາເທີ້ນ
ໃຫ້ຖິ້ມຮູບເຄົາລົບທີ່ເຮົາກຽດຊັງນັ້ນເສຍ
ແລະຢ່າໜີຫ່າງຈາກເຮົາໄປ.
2 ຖ້າພວກເຈົ້າສາບານໃນນາມຂອງພຣະເຈົ້າຜູ້ມີຊີວິດຢູ່ດ້ວຍຄວາມຈິງ
ຄວາມຍຸດຕິທຳ ແລະຄວາມສັດຊື່
ຊາດທັງປວງກໍຈະອ້ອນວອນໃຫ້ເຮົາອວຍພອນພວກເຂົາ
ແລະພວກເຂົາທັງຫລາຍກໍຈະສັນລະເສີນເຮົາ."
3 ພຣະຜູ້ເປັນເຈົ້າຊົງກ່າວຕໍ່ຊາວຢູດາ ແລະຊາວເຢຣູຊາເລັມວ່າ,
"ຈົ່ງໄຖນາເຮື້ອຂອງເຈົ້າ ຢ່າຫວ່ານເມັດເຂົ້າລົງໃນກໍໜາມ.
4 ຊາວຢູດາ ແລະ ເຢຣູຊາເລັມເອີຍ
ຈົ່ງຮັກສາຄຳໝັ້ນສັນຍາທີ່ເຈົ້າມີຕໍ່ເຮົາພຣະຜູ້ເປັນເຈົ້າຂອງເຈົ້າ
ແລະຈົ່ງມອບຈິດໃຈຂອງເຈົ້າໃຫ້ແກ່ເຮົາ
ຢ້ານວ່າຄວາມຄຽດຮ້າຍຂອງເຮົາຈະເຜົາໄໝ້ເໝືອນໄຟ
ເນື່ອງຈາກຄວາມຊົ່ວທີ່ພວກເຈົ້າໄດ້ເຮັດ
ໄຟນັ້ນຈະເຜົາໄໝ້ແລະຈະບໍ່ມີໃຜມອດໄດ້.

## ຊາວຢູດາຖືກບຸກລຸກ

5 ຈົ່ງເປົ່າແກໃຫ້ດັງໄປທົ່ວປະເທດ
ໃຫ້ຮ້ອງສຽງດັງຊັດແຈ້ງ
ເພື່ອບອກປະຊາຊົນຢູດາ ແລະ ເຢຣູຊາເລັມ
ແລ່ນເຂົ້າໄປໃນເມືອງທີ່ມີປ້ອມປ້ອງກັນ.
6 ໃຫ້ຍົກທຸງມຸ່ງໜ້າໄປຍັງເມືອງຊີໂອນ
ຈົ່ງແລ່ນໄປໃຫ້ພົ້ນ ຢ່າຊ້າຢູ່
ພຣະຜູ້ເປັນເຈົ້າຈະນຳເອົາຄວາມຮ້າຍ
ແລະການທຳລາຍອັນຍິ່ງໃຫຍ່ມາຈາກທາງເໜືອ.
7 ສິງໂຕໄດ້ອອກມາຈາກບ່ອນລີ້ຊ້ອນຂອງມັນແລ້ວ

ຜູ້ທຳລາຍນາໆ ຊາດໄດ້ຍ່າງອອກມາຈາກບ່ອນຂອງມັນ
ເພື່ອທຳລາຍຊາວຢູດາ ໃຫ້ໝົດສິ້ນໄປ
ຫົວເມືອງທັງຫລາຍຂອງຊາວຢູດາ ຈະເພພັງຮ້າງເປົ່າ
ແລະຈະບໍ່ມີໃຜອາໄສຢູ່ໃນເມືອງເຫລົ່ານັ້ນ.
8 ດ້ວຍເຫດນີ້ ຈົ່ງນຸ່ງເຄື່ອງໄວ້ທຸກ ແລະຮ້ອງໄຫ້ຄວນຄາງ
ເພາະວ່າພຣະພິໂລດອັນຮຸນແຮງຂອງ ພຣະຜູ້ເປັນເຈົ້າ
ບໍ່ໄດ້ຫັນໜີໄປຈາກຊາວຢູດາ ເລີຍ.”

9ພຣະຜູ້ເປັນເຈົ້າ ກ່າວວ່າ “ຕໍ່ມາໃນມື້ນັ້ນທັງກະສັດ ແລະພວກເຈົ້ານາຍຈະໝົດກຳລັງໃຈ
ບັນດາປະໂລຫິດຈະຕົກອົກຕົກໃຈ ແລະຜູ້ປະກາດພຣະທຳກໍຈະອັດສະຈັນໃຈ”
10ແລ້ວຂ້າພະເຈົ້າຈຶ່ງທູນວ່າ “ຂ້າແດ່ອົງ ພຣະຜູ້ເປັນເຈົ້າ ພຣະອົງຊົງຫລອກລວງຊົນຊາດນີ້
ແລະກຸງ ເຢຣູຊາເລັມ ວ່າ ‘ເຈົ້າທັງຫລາຍຈະຢູ່ເຢັນເປັນສຸກ’ ແຕ່ທີ່ຈິງດາບໄດ້ມາເຖິງຊີວິດຂອງ
ພວກເຂົາທັງຫລາຍ”
11“ໃນເທື່ອນັ້ນ ພວກເຂົາຈະກ່າວແກ່ຊົນຊາດນີ້ ແລະແກ່ກຸງ ເຢຣູຊາເລັມ ວ່າ ‘ລົມຮ້ອນຈາກ
ບ່ອນສູງໃນຖິ່ນແຫ້ງແລ້ງທຸລະກັນດານພັດມາສູ່ບຸດສາວປະຊາຊົນຂອງເຮົາ ບໍ່ແມ່ນຈະມາຟັດ
ຫລືມາຊຳລະ 12ກະແສລົມທີ່ແຮງຈະພັດມາຈາກທີ່ເຫລົ່ານັ້ນມາສູ່ເຮົາ ບັດນີ້ເຮົາຈະກ່າວຄຳຕັດ-
ສິນຕໍ່ພວກເຂົາ’ 13ເບິ່ງແມ ພວກເຂົາຈະຂຶ້ນມາເໝືອນເມກ ລົດຮົບຂອງພວກເຂົາຈະເໝືອນລົມ
ບ້າໝູ ມ້າທັງຫລາຍຂອງພວກເຂົາໄວຍິ່ງກວ່ານົກອິນຊີ ວິບັດແກ່ເຮົາທັງຫລາຍ ເພາະວ່າເຮົາ
ຈະຕ້ອງຈິບຫາຍ 14ກຸງ ເຢຣູຊາເລັມ ເອີຍ ຈົ່ງລ້າງຈິດໃຈຂອງເຈົ້າໃຫ້ພົ້ນຈາກຄວາມຊົ່ວຮ້າຍ
ເພື່ອເຈົ້າຈະລອດພົ້ນໄດ້ ຄວາມຄິດຊົ່ວຮ້າຍຂອງເຈົ້ານັ້ນຈະສິງຢູ່ໃນໃຈຂອງເຈົ້າດົນຈັກເທົ່າໃດ
15ເພາະວ່າມີສຽງປະກາດມາຈາກເມືອງ ດານ ແລະໂຄສະນາຄວາມຊົ່ວຮ້າຍຈາກພູເຂົາ ເອຟຣາ-
ຢິມ 16ຈົ່ງກ່າວແກ່ບັນດາປະຊາຊາດ ເບິ່ງແມ ຈົ່ງໂຄສະນາແກ່ກຸງ ເຢຣູຊາເລັມ ວ່າ ບັນດາຜູ້
ອ້ອມມາຈາກແຜ່ນດິນໄກ ພວກເຂົາທັງຫລາຍໂຫ່ຮ້ອງເຂົ້າໃສ່ຫົວເມືອງ ຢູດາ 17ພວກເຂົາທັງ-
ຫລາຍອ້ອມ ຢູດາ ໄວ້ເໝືອນກັບຜູ້ເບິ່ງແຍງເຝົ້ານາ ເພາະວ່າ ຢູດາ ໄດ້ກະບົດຕໍ່ເຮົາ” ພຣະຜູ້-
ເປັນເຈົ້າ ກ່າວດັ່ງນີ້ແຫລະ 18“ການດຳເນີນຊີວິດ ແລະການກະທຳທັງຫລາຍຂອງເຈົ້າໄດ້ນຳ
ເລື່ອງນີ້ມາເໜືອເຈົ້າ ນີ້ແຫລະເປັນຜົນແຫ່ງຄວາມຊົ່ວຮ້າຍຂອງເຈົ້າ ເພາະມັນຂົມຂື່ນ ເພາະມັນ
ມາເຖິງຈິດໃຈຂອງເຈົ້າທັນທີທັນໃດ”

## ເຢເຣມີຢາຮ້ອງຄາງເລື່ອງຢູດາ

19ແສນລະທົມ ແສນລະທົມ ຂ້ອຍກໍບິດຕົວດ້ວຍຄວາມເຈັບປວດ ໂອ ຝາດວງໃຈຂອງຂ້ອຍ
ເອີຍ ຈິດໃຈຂອງຂ້ອຍກໍວຸ້ນວາຍ ຂ້ອຍຈະຢູ່ເສີຍໆບໍ່ໄດ້ ເພາະຈິດໃຈຂ້ອຍໄດ້ຍິນສຽງເຂົາສັດ
ສຽງປຸກຂອງສົງຄາມ 20ການປະກາດເລື່ອງຄວາມຈິບຫາຍໄລ່ຕິດຕາມຄວາມຈິບຫາຍ ແຜ່ນດິນ
ທັງໝົດກໍຖືກຖິ້ມຮ້າງ ບັນດາເຕັນຂອງຂ້ອຍກໍຖືກທຳລາຍໄປໂດຍໄວ ມ່ານທັງຫລາຍຂອງຂ້ອຍ
ກໍໝົດໄປໃນບັດດຽວ 21ຂ້ອຍຈະຕ້ອງເບິ່ງທຸງ ແລະຟັງສຽງເຂົາສັດດົນຈັກເທົ່າໃດ
22“ເພາະປະຊາຊົນຂອງເຮົາໂງ່ຈ້າ ພວກເຂົາທັງຫລາຍບໍ່ຮູ້ຈັກເຮົາ ພວກເຂົາເປັນລູກຫລານ

ທີ່ໂງ່ຈ້າ ພວກເຂົາບໍ່ມີຄວາມເຂົ້າໃຈ ພວກເຂົາເຮັດຄວາມຊົ່ວເກັ່ງ ແຕ່ບໍ່ເຂົ້າໃຈທີ່ຈະເຮັດດີ"
23ຂ້າພະເຈົ້າເບິ່ງພື້ນທີ່ໂລກ ແລະເບິ່ງແມ ເປັນທີ່ຮ້າງແລະວ່າງເປົ່າເສຍ ແລະເບິ່ງຟ້າສະຫວັນ
ໃນນັ້ນກໍບໍ່ມີຄວາມສະຫວ່າງ 24ຂ້າພະເຈົ້າເບິ່ງພູເຂົາ ເບິ່ງແມ ມັນກຳລັງສັ່ນຢູ່ ບັນດາໂນນພູກໍ
ແກວ່ງໄປແກວ່ງມາ 25ຂ້າພະເຈົ້າເບິ່ງ ແລະເບິ່ງແມ ບໍ່ມີມະນຸດເລີຍ ນົກທັງປວງແຫ່ງທ້ອງຟ້າ
ອາກາດໄດ້ໜີໄປແລ້ວ 26ຂ້າພະເຈົ້າເບິ່ງ ແລະເບິ່ງແມ ຮົ້ວສວນ ຫລືໄຮ່ນາຕາກ້າກໍເປັນຖິ່ນ
ແຫ້ງແລ້ງກັນດານ ແລະຫົວເມືອງທັງໝົດກໍຫັກພັງໄປຕໍ່ພຣະພັກພຣະຜູ້ເປັນເຈົ້າ ຕໍ່ພຣະພິໂລດ
ອັນຮ້ອນແຮງຂອງພຣະອົງ 27ເພາະພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ "ແຜ່ນດິນທັງໝົດຈະເປັນ
ບ່ອນຮ້າງ ເຖິງປານນັ້ນ ເຮົາກໍຍັງບໍ່ໄດ້ເຮັດໃຫ້ເຖິງອະວະສານເທື່ອ 28ເພາະເລື່ອງນີ້ໂລກຈະໄວ້
ທຸກ ແລະຟ້າສະຫວັນເບື້ອງເທິງຈະດຳມືດ ເພາະເຮົາໄດ້ໃຫ້ຄຳເວົ້າແລ້ວ ເຮົາໄດ້ໝາຍໃຈໄວ້
ແລ້ວ ເຮົາຈະບໍ່ປ່ຽນໃຈ ຫລືຖອຍຫລັງກັບ 29ເມື່ອໄດ້ຍິນສຽງທະຫານມ້າ ແລະນັກທະນູ ຊາວ
ເມືອງທັງໝົດກໍຈະໜີໄປ ພວກເຂົາເຂົ້າໄປຢູ່ໃນພຸ່ມໄມ້ ແລະໄຕ່ປີນໄປທ່າມກາງສີລາ ຫົວເມືອງ
ທຸກແຫ່ງກໍຖືກປະຖິ້ມ ແລະບໍ່ມີມະນຸດອາໄສຢູ່ໃນເມືອງເຫລົ່ານັ້ນເລີຍ 30ເຈົ້າຜູ້ທີ່ຖືກຖິ້ມຮ້າງເອີຍ
ທີ່ເຈົ້າແຕ່ງຕົວສີແດງນັ້ນເຈົ້າເຮັດຫຍັງກັນ ແລະທີ່ເຈົ້າປະດັບຕົວດ້ວຍເຄື່ອງເອ້ທອງຄຳ ທີ່ເຈົ້າ
ຂະຫຍາຍດວງຕາໃຫ້ກວ້າງດ້ວຍແຕ້ມສີ ເຈົ້າແຕ່ງຕົວໃຫ້ງາມເຮັດຫຍັງ ຄົນຮັກຂອງເຈົ້າຈະ
ໝິ່ນປະໝາດເຈົ້າ ພວກເຂົາທັງຫລາຍຈະສະແຫວງຫາຊີວິດຂອງເຈົ້າ 31ເພາະເຮົາໄດ້ຍິນສຽງຄື
ກັບສຽງຜູ້ຍິງເກີດລູກຮ້ອງແສນເຈັບປວດຄືກັບຈະເກີດລູກຫົວປີ ສຽງຮ້ອງແຫ່ງບຸດສາວຊີໂອນ
ນັ້ນ ແທບຈະຂາດໃຈ ຢຽດມືຂອງນາງອອກຮ້ອງວ່າ 'ວິບັດແກ່ຂ້ອຍ ຈິດໃຈຂ້ອຍກໍອ່ອນເພຍຢູ່
ເພາະເຫດຜູ້ຂ້າຄົນ'"

# ບົດທີ 5

## ຄວາມບາບຂອງຢູດາ ຄືການປະພຶດຊົ່ວຮ້າຍ

1"ຈົ່ງແລ່ນໄປແລ່ນມາຢູ່ໃນຖະໜົນກຸງເຢຣູຊາເລັມ ບັດນີ້ ຈົ່ງເບິ່ງ ແລະຮູ້ຈັກ ຈົ່ງຄົ້ນຕາມ
ເມືອງເບິ່ງວ່າ ຈະຫາມະນຸດຈັກຄົນໜຶ່ງໄດ້ຫລືບໍ່ ຄືຄົນທີ່ເຮັດການຍຸດຕິທຳ ແລະສະແຫວງຫາ
ຄວາມຈິງ ເພື່ອເຮົາຈະໄດ້ອະໄພໂທດໃຫ້ແກ່ເມືອງນັ້ນ 2ເຖິງແມ່ນພວກເຂົາທັງຫລາຍກ່າວວ່າ
'ຕາບໃດທີ່ພຣະຜູ້ເປັນເຈົ້າຊົງພຣະຊົນຢູ່' ພວກເຂົາກໍຍັງປະຕິຍານບໍ່ຈິງຢ່າງແນ່ນອນ" 3ຂ້າແດ່
ພຣະຜູ້ເປັນເຈົ້າ ພຣະເນດຂອງພຣະອົງຊົງຫາຄວາມຈິງບໍ່ແມ່ນບໍ ພຣະອົງຊົງຂ້ຽນຕີພວກເຂົາ
ແຕ່ພວກເຂົາກໍບໍ່ຮູ້ສຶກສຳນຶກ ພຣະອົງຊົງລ້າງຜານພວກເຂົາ ແຕ່ພວກເຂົາປະຕິເສດບໍ່ຍອມດີ
ຂຶ້ນ ພວກເຂົາໄດ້ເຮັດໃຫ້ໜ້າຂອງຕົນແຂງກະດ້າງ ປາກແຂງກະດ້າງຍິ່ງກວ່າຫີນ ພວກເຂົາ
ປະຕິເສດບໍ່ຍອມກັບໃຈ

4ແລ້ວຂ້າພະເຈົ້າຈຶ່ງທູນວ່າ "ແນ່ນອນຄົນເຫລົ່ານີ້ເປັນແຕ່ຜູ້ນ້ອຍ ເຂົາເຈົ້າໂງ່ຈ້າ ເພາະບໍ່ຮູ້-
ຈັກເສັ້ນທາງຂອງພຣະຜູ້ເປັນເຈົ້າ ບໍ່ຮູ້ຈັກຄຳຕັດສິນຂອງພຣະເຈົ້າຂອງຕົນ 5ຂ້າພະອົງຈະໄປ
ຫາພວກຜູ້ໃຫຍ່ ແລະຈະເວົ້າກັບພວກເຂົາທັງຫລາຍ ເພາະພວກເຂົາຮູ້ຈັກເສັ້ນທາງຂອງພຣະ-
ຜູ້ເປັນເຈົ້າ ແລະຮູ້ຈັກຄຳຕັດສິນຂອງພຣະເຈົ້າຂອງຕົນ" ແຕ່ພວກເຂົາທຸກຄົນກໍໄດ້ຫັກແອກ

ເສຍ ໄດ້ລະເມີດພັນທະສັນຍາເສຍ [6]ເພາະສະນັ້ນ ໂຕສິງຈາກປ່າຈະມາສັງຫານພວກເຂົາ ໝາ
ປ່າແຫ່ງຕອນຄໍ່າຈະທໍາລາຍພວກເຂົາ ເສືອດາວຈະເຝົ້າຫົວເມືອງທັງຫລາຍຂອງພວກເຂົາ ທຸກ
ຄົນທີ່ໄປຈາກເມືອງເຫລົ່ານັ້ນຈະຖືກຈີກເປັນຕ່ອນໆ ເພາະວ່າຄວາມລະເມີດຂອງຕົນກໍຫລວງ-
ຫລາຍ ການບໍ່ສັດຊື່ຂອງພວກເຂົາກໍໃຫຍ່ຫລາຍ ຄວາມບາບຂອງຢູດາ ຄືການລ່ວງປະເວນີ
[7]"ເຮົາຈະໃຫ້ອະໄພເຈົ້າໄດ້ຢ່າງໃດ ລູກຫລານຂອງເຈົ້າໄດ້ປະຖິ້ມເຮົາແລ້ວ ແລະໄດ້ອ້າງຜູ້ທີ່
ບໍ່ແມ່ນພະໃນການເຮັດປະຕິຍານ ເມື່ອເຮົາລ້ຽງພວກເຂົາໃຫ້ອີ່ມ ພວກເຂົາກໍເຮັດການລ່ວງປະ-
ເວນີ ແລ້ວກໍຍົກຂະບວນກັນໄປທີ່ເຮືອນຂອງຍິງບໍ່ຊື່ສັດ [8]ພວກເຂົາທັງຫລາຍເໝືອນກັບມ້າທີ່ກິນ
ອີ່ມໃນຕອນເຊົ້າ ທຸກຄົນກໍຮ້ອງຫາເມຍຂອງເພື່ອນບ້ານ" [9]ພຣະຜູ້ເປັນເຈົ້າກ່າວວ່າ "ເພາະສິ່ງ
ເຫລົ່ານີ້ເຮົາຈະບໍ່ລົງໂທດພວກເຂົາບໍ ແລະຈິດໃຈເຮົາບໍ່ຄວນທີ່ຈະແກ້ແຄ້ນປະຊາຊາດທີ່ເປັນ
ແບບນີ້ບໍ

## ຄວາມບາບຂອງຢູດາ ຄືການຂາດຄວາມເຄົາລົບ

[10]ຂຶ້ນໄປຕາມກໍາແພງຂອງມັນ ແລະທໍາລາຍເສຍ ແຕ່ຢ່າໄປເຖິງອະວະສານເລີຍ ເອົາກິ່ງ
ກ້ານຂອງມັນອອກ ເພາະນັ້ນບໍ່ແມ່ນເປັນຂອງພຣະຜູ້ເປັນເຈົ້າ [11]ເພາະເຊື້ອສາຍຂອງອິສຣາ-
ເອນ ແລະເຊື້ອສາຍຂອງຢູດາໄດ້ທໍລະຍົດຕໍ່ເຮົາແລ້ວ" ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ
[12]ພວກເຂົາເວົ້າຂີ້ຕົວະໃນເລື່ອງພຣະຜູ້ເປັນເຈົ້າ ແລະໄດ້ກ່າວວ່າ "ພຣະອົງບໍ່ໄດ້ຊົງກະທໍາ
ປະການໃດ ບໍ່ມີການຮ້າຍອັນໃດຈະເກີດຂຶ້ນແກ່ເຮົາ ເຮົາກໍຈະບໍ່ເຫັນດາບ ຫລືການອຶດຫິວອາ-
ຫານ [13]ຜູ້ປະກາດພຣະທໍາກໍຈະເປັນແຕ່ລົມ ພຣະທໍາບໍ່ມີໃນຄົນເຫລົ່ານັ້ນ ຂໍໃຫ້ເປັນຢ່າງນັ້ນແກ່
ເຂົາເຖີດ"
[14]ເພາະສະນັ້ນ ພຣະຜູ້ເປັນເຈົ້າພຣະເຈົ້າຈອມໂຍທາຈຶ່ງກ່າວດັ່ງນີ້ວ່າ "ເພາະເຈົ້າທັງຫລາຍ
ກ່າວຖ້ອຍຄໍາເຫລົ່ານີ້ ເບິ່ງແມ ເຮົາຈະເຮັດຖ້ອຍຄໍາຂອງເຮົາທີ່ຢູ່ໃນປາກຂອງເຈົ້າໃຫ້ເປັນໄຟ
ແລະຊົນຊາດນີ້ເປັນຟືນ ໄຟນັ້ນຈະເຜົາຜານພວກເຂົາເສຍ [15]ເບິ່ງແມ ເຊື້ອສາຍຂອງອິສຣາ-
ເອນເອີຍ ເຮົາຈະນໍາປະຊາຊາດຈາກແດນໄກມາສູ້ເຈົ້າທັງຫລາຍ" ພຣະຜູ້ເປັນເຈົ້າກ່າວດັ່ງນີ້
ແຫລະ "ເປັນປະຊາຊາດທີ່ມີອໍານາດໃຫຍ່ໂຕ ເປັນປະຊາຊາດດຶກດໍາບັນ ເປັນປະຊາຊາດທີ່ເຈົ້າ
ບໍ່ຮູ້ພາສາຂອງເຂົາ ເຂົາຈະເວົ້າຫຍັງເຈົ້າກໍບໍ່ເຂົ້າໃຈ [16]ແຫລ່ງທະນູຂອງເຂົາເໝືອນອຸບໂມງເປີດ
ອອກ ພວກເຂົາເປັນທະຫານທຸກຄົນ [17]ພວກເຂົາຈະກິນສິ່ງທີ່ເຈົ້າກ່ຽວໄດ້ ແລະກິນອາຫານ
ຂອງເຈົ້າເສຍ ຊຶ່ງລູກຊາຍ ແລະບຸດສາວຂອງເຈົ້າຄວນຈະໄດ້ກິນ ພວກເຂົາຈະກິນຝູງແກະຝູງ
ງົວຂອງເຈົ້າເສຍ ພວກເຂົາຈະກິນເຄືອອະງຸ່ນ ແລະຕົ້ນໝາກເດື່ອເທດຂອງເຈົ້າເສຍ ພວກເຂົາ
ຈະທໍາລາຍຕົວເມືອງທີ່ມີປ້ອມຂອງເຈົ້າ ຊຶ່ງເຈົ້າວາງໃຈເສຍດ້ວຍດາບ"

## ຄວາມບາບຂອງຢູດາ ຄືຄວາມຊົ່ວຝ່າຍຈິດວິນຍານ ແລະຝ່າຍບ້ານເມືອງ

[18]ພຣະຜູ້ເປັນເຈົ້າກ່າວວ່າ "ເຖິງແມ່ນວ່າໃນວັນເຫລົ່ານັ້ນ ເຮົາກໍຍັງບໍ່ເຮັດແກ່ເຈົ້າໃຫ້ເຖິງ
ອະວະສານ [19]ແລະຕໍ່ມາເມື່ອເຈົ້າທັງຫລາຍຈະກ່າວວ່າ 'ເປັນຫຍັງພຣະຜູ້ເປັນເຈົ້າພຣະເຈົ້າ
ຂອງເຮົາທັງຫລາຍຈຶ່ງເຮັດບັນດາສິ່ງເຫລົ່ານີ້ແກ່ເຮົາ' ເຈົ້າຈະກ່າວແກ່ເຂົາວ່າ 'ເຈົ້າໄດ້ປະຖິ້ມ
ເຮົາໄປບົວລະບັດພະຕ່າງດ້າວໃນແຜ່ນດິນຂອງເຈົ້າສັນໃດ ເຈົ້າຈະຕ້ອງໄປບົວລະບັດຄົນຕ່າງ

ຊາດໃນແຜ່ນດິນຊຶ່ງບໍ່ແມ່ນຂອງເຈົ້າສັນນັ້ນ'
20ຈົ່ງປະກາດຂໍ້ຄວາມຕໍ່ໄປນີ້ໃນເຊື້ອສາຍຂອງຢາໂຄບ ແລະຈົ່ງໂຄສະນາເລື່ອງນີ້ໃນຢູດາ
ວ່າ 21ຊົນຊາດທີ່ໂງ່ຈ້າ ແລະຂາດຄວາມເຂົ້າໃຈເອີຍ ຜູ້ມີຕາ ແຕ່ເບິ່ງບໍ່ເຫັນ ຜູ້ມີຫູ ແຕ່ຟັງບໍ່ໄດ້
ຍິນ ຈົ່ງຟັງຂໍ້ຄວາມນີ້" 22ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ "ເຈົ້າບໍ່ຢຳເກງເຮົາບໍ ເຈົ້າບໍ່ຕົວສັ່ນຢູ່ຕໍ່-
ໜ້າເຮົາບໍ ຄືເຮົາຜູ້ວາງກອງດິນຊາຍໄວ້ເປັນເຂດອ້ອມທະເລ ເປັນເຄື່ອງກີດຂວາງເປັນນິດບໍ່ໃຫ້
ຜ່ານໄປໄດ້ ເຖິງວ່າຄື້ນຈະຊັດ ກໍເອົາຊະນະບໍ່ໄດ້ ແມ່ນຄື້ນຈະຄະນອງ ກໍຂ້າມໄປບໍ່ໄດ້ 23ແຕ່
ຊົນຊາດນີ້ມີໃຈດື້ດ້ານ ແລະກະບົດ ພວກເຂົາໄດ້ຫັນເຫ ແລະຈາກໄປເສຍ 24ຂໍ້ຄວາມນີ້ບໍ່ໄດ້ຢູ່
ໃນໃຈຂອງພວກເຂົາທັງຫລາຍວ່າ 'ບັດນີ້ໃຫ້ເຮົາຢຳເກງພຣະຜູ້ເປັນເຈົ້າພຣະເຈົ້າຂອງເຮົາ ຜູ້
ຊົງປະທານຝົນຕາມລະດູຂອງມັນຄືຝົນຕົ້ນລະດູ ແລະຝົນປາຍລະດູ ແລະຊົງຮັກສາອາທິດທີ່
ກຳນົດການກ່ຽວເຂົ້າໄວ້ໃຫ້ແກ່ເຮົາ' 25ຄວາມຊົ່ວຊ້າຂອງເຈົ້າໄດ້ເຮັດໃຫ້ສິ່ງເຫລົ່ານີ້ຫັນໄປເສຍ
ແລະບາບຂອງເຈົ້າທັງຫລາຍກໍກັນສິ່ງທີ່ດີໄວ້ເສຍຈາກເຈົ້າ 26ເພາະທ່າມກາງປະຊາຊົນຂອງເຮົາ
ຈະພົບຄົນຊົ່ວ ພວກເຂົາຄອຍຖ້າເໝືອນຄົນດັກນົກລີ້ຢູ່ ພວກເຂົາວາງກັບໄວ້ ພວກເຂົາດັກຈັບ
ຄົນ 27ເຮືອນຂອງເຂົາເຕັມດ້ວຍຄວາມຫລອກລວງເໝືອນກັບຕຸ້ມທີ່ມີນົກເຕັມ ເພາະສະນັ້ນ
ພວກເຂົາຈຶ່ງໃຫຍ່ໂຕ ແລະຮັ່ງມີ 28ພວກເຂົາຈຶ່ງອ້ວນພີຈົນຕົວກ້ຽງດີ ໃນເລື່ອງການເຮັດຄວາມ
ຊົ່ວແມ່ນພວກເຂົາລ້ຳໜ້າ ພວກເຂົາບໍ່ໄດ້ຕັດສິນຄະດີ ຄືຄະດີຂອງລູກກຳພ້າພໍ່ ດ້ວຍຄວາມຍຸດ-
ຕິທຳ ເຖິງປານນັ້ນ ພວກເຂົາກໍຈະເລີນ ພວກເຂົາບໍ່ໄດ້ປ້ອງກັນສິດທິຂອງຄົນຂັດສົນ" 29ພຣະ-
ຜູ້ເປັນເຈົ້າກ່າວວ່າ "ເພາະສິ່ງນີ້ເຮົາຈະບໍ່ລົງໂທດເຂົາບໍ ແລະບໍ່ຄວນທີ່ຈິດໃຈເຮົາຈະແກ້ແຄ້ນ
ປະຊາຊາດທີ່ເປັນເຊັ່ນນີ້ບໍ 30ສິ່ງທີ່ໜ້າຕົກໃຈ ແລະໜ້າຢ້ານກົວໄດ້ເກີດຂຶ້ນໃນແຜ່ນດິນນີ້ 31ຄືຜູ້
ປະກາດພຣະທຳໄດ້ປະກາດພຣະທຳບໍ່ຈິງ ແລະບັນດາປະໂລຫິດກໍປົກຄອງຕາມການຊີ້ນິ້ວຂອງ
ຕົນ ແລະປະຊາຊົນຂອງເຮົາມັກການເຊັ່ນນີ້ ແຕ່ເຈົ້າທັງຫລາຍຈະເຮັດຫຍັງເມື່ອທີ່ສຸດປາຍມາ
ເຖິງ"

# ບົດທີ 6

## ຊາວອິສຣາເອນປະຖິ້ມທາງຂອງພຣະເຈົ້າ

1ໂອ ປະຊາຊົນເບັນຢາມິນເອີຍ ຈົ່ງລວມກັນໜີໄປຈາກກາງກຸງເຢຣູຊາເລັມ ຈົ່ງເປົ່າເຂົາ
ສັດໃນເມືອງເຕໂກອາ ແລະຍົກສັນຍານໄຟຂຶ້ນໄວ້ເທິງເບັດ-ຮັກເຄເຣັມ ເພາະເຫດຮ້າຍໂຜ່
ອອກມາຈາກທິດເໜືອ ຄືການທຳລາຍຢ່າງໃຫຍ່ຫລວງ 2ເຮົາປຽບບຸດສາວຂອງຊີໂອນເໝືອນ
ກັບສາວງາມ ແຕ່ກໍຈະຖືກທຳລາຍ 3ຜູ້ລ້ຽງແກະພ້ອມກັບຝູງແກະຈະມາສູ້ນາງ ພວກເຂົາຈະຕັ້ງ
ເຕັນອ້ອມນາງໄວ້ ຕ່າງກໍຈະຫາກິນຢູ່ໃນບ່ອນຂອງມັນ
4"ຈົ່ງຕຽມເຮັດສົງຄາມກັບນາງ ລຸກຂຶ້ນ ໃຫ້ເຮົາໂຈມຕີຕອນທ່ຽງວັນ" "ວິບັດແກ່ພວກເຮົາ
ເພາະວ່າກາງເວັນຄ້ອຍເສຍແລ້ວ ເງົາຂອງຕອນຄ່ຳກໍຍາວອອກໄປ" 5"ລຸກຂຶ້ນ ໃຫ້ເຮົາເຂົ້າຕີ
ຕອນກາງຄືນ ແລະທຳລາຍບັນດາວັງຂອງນາງເສຍ" 6ເພາະພຣະຜູ້ເປັນເຈົ້າຈອມໂຍທາກ່າວ
ດັ່ງນີ້ວ່າ "ຈົ່ງປ້ຳຕົ້ນໄມ້ຂອງນາງລົງ ຈົ່ງກໍ່ກອງດິນໄວ້ສູ້ກຸງເຢຣູຊາເລັມ ນີ້ແຫລະ ນະຄອນທີ່

ຕ້ອງຖືກລົງໂທດ ພາຍໃນນາງບໍ່ມີຫຍັງນອກຈາກການບີບບັງຄັບ [7]ບໍ່ນ້ຳຍັງມີນ້ຳເຢັນໃຫ້ສັນໃດ
ນາງກໍຍັງມີຄວາມຊົ່ວໃຫ້ເກີດຂຶ້ນສັນນັ້ນ ໄດ້ຍິນເຖິງຄວາມທາລຸນ ແລະການທຳລາຍທີ່ມີພາຍ
ໃນນາງ ຄວາມເສົ້າໂສກ ແລະຄວາມບາດເຈັບກໍປະກົດຕໍ່ເຮົາສະເໝີ [8]ກຸງເຢຣູຊາເລັມເອີຍ ຈົ່ງ
ຮັບຄຳຕັກເຕືອນເຖີດ ຢ້ານວ່າຈິດໃຈເຮົາຈະຫວິດຈາກເຈົ້າໄປເສຍ ຢ້ານວ່າເຮົາຈະເຮັດເຈົ້າໃຫ້
ເປັນບ່ອນຮ້າງເປົ່າ ເປັນແຜ່ນດິນປາດສະຈາກຄົນອາໄສ”

[9]ພຣະຜູ້ເປັນເຈົ້າຈອມໂຍທາກ່າວດັ່ງນີ້ວ່າ “ພວກເຂົາທັງຫລາຍຈະກວາດອິສຣາເອນທີ່
ເຫລືອຢູ່ນັ້ນໃຫ້ກ້ຽງເໝືອນກັບເລັມເຄືອອະງຸ່ນ ເໝືອນຄົນເກັບໝາກອະງຸ່ນເອົາມືເກັບຜົນໃສ່ໃນ
ກະຕ່າອີກເທື່ອໜຶ່ງ”

[10]ຂ້າພະເຈົ້າຄວນຈະເວົ້າ ແລະໃຫ້ຄຳຕັກເຕືອນແກ່ຜູ້ໃດດີນໍ ເພື່ອພວກເຂົາຈະໄດ້ຍິນ ເບິ່ງ
ແມ ຫູຂອງເຂົາກໍຕັນເສຍແລ້ວ ພວກເຂົາຟັງບໍ່ໄດ້ ພຣະທຳຂອງພຣະຜູ້ເປັນເຈົ້າເປັນສິ່ງທີ່ພວກ
ເຂົາໝິ່ນປະໝາດ ພວກເຂົາບໍ່ພໍໃຈຟັງ [11]ເພາະສະນັ້ນ ຂ້າພະເຈົ້າຈຶ່ງມີພຣະພິໂລດຂອງພຣະ-
ຜູ້ເປັນເຈົ້າເຕັມໄປໝົດ ຂ້າພະເຈົ້າຈະເກັບໄວ້ອີກບໍ່ໄຫວແລ້ວ “ເຮົາຈະຖອກອອກຫົດເດັກ-
ນ້ອຍໆຢູ່ຕາມຖະໜົນ ແລະຫົດພວກຄົນໜຸ່ມທີ່ຊຸມນຸມກັນຢູ່ ທັງຜົວ ແລະເມຍກໍຈະຕ້ອງເອົາໄປ
ທັງຄົນເຖົ້າຄົນແກ່ດ້ວຍ [12]ບ້ານເຮືອນຂອງພວກເຂົາຈະຕ້ອງຍົກໃຫ້ເປັນຂອງຄົນອື່ນ ທັງໄຣ່ນາ
ແລະເມຍຂອງເຂົາດ້ວຍ ເພາະເຮົາຈະຢຽດມືຂອງເຮົາອອກຕໍ່ສູ້ຊາວແຜ່ນດິນ” ພຣະຜູ້ເປັນເຈົ້າ
ກ່າວດັ່ງນີ້ແຫລະ

[13]“ເພາະວ່າ ຕັ້ງແຕ່ຄົນທີ່ຕ່ຳຕ້ອຍທີ່ສຸດຈົນເຖິງຄົນໃຫຍ່ໂຕທີ່ສຸດ ທຸກຄົນໂລບຢາກໄດ້ກຳໄລ
ແລະທຸກຄົນກໍເຮັດການດ້ວຍຄວາມບໍ່ຈິງ ຕັ້ງແຕ່ຜູ້ປະກາດພຣະທຳຕະຫລອດເຖິງປະໂລຫິດ
[14]ພວກເຂົາທັງຫລາຍໄດ້ຮັກສາບາດແຜແຫ່ງບຸດສາວປະຊາຊົນຂອງເຮົາແຕ່ເລັກນ້ອຍກ່າວວ່າ
‘ສັນຕິສຸກ ສັນຕິສຸກ’ ເມື່ອບໍ່ມີສັນຕິສຸກເລີຍ [15]ເມື່ອພວກເຂົາເຮັດການໜ້າກຽດໜ້າຊັງ ພວກເຂົາ
ອັບອາຍບໍ? ພວກເຂົາບໍ່ອັບອາຍເລີຍ ບໍ່ຮູ້ຈັກວ່າຢ່າງໃດຈຶ່ງຈະຂາຍໜ້າ ເພາະສະນັ້ນ ພວກ
ເຂົາຈະລົ້ມລົງທ່າມກາງພວກທີ່ລົ້ມລົງແລ້ວ ເມື່ອເຮົາລົງໂທດພວກເຂົາ ພວກເຂົາຈະລົ້ມ”
ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ

[16]ພຣະຜູ້ເປັນເຈົ້າຊົງກ່າວຕໍ່ໄພ່ພົນຂອງພຣະອົງວ່າ,
“ພວກເຈົ້າຈົ່ງຢືນຢູ່ໃນທາງສີ່ແຍກ
ໃຫ້ຖາມຫາທາງດີ ຄືທາງເກົ່ານັ້ນຢູ່ໃສ?
ແລ້ວໃຫ້ຍ່າງເຂົ້າໄປໃນທາງນັ້ນພວກເຈົ້າຈະມີຄວາມສະຫງົບສຸກ
ແຕ່ພວກເຈົ້າໄດ້ເວົ້າວ່າ ພວກເຮົາຈະບໍ່ຍ່າງເຂົ້າໄປໃນທາງນັ້ນ.
[17] ເຮົາໄດ້ແຕ່ງຄົນເຝົ້າຍາມ
ເພື່ອເປົ່າແກເຕືອນພວກເຈົ້າ
ແຕ່ພວກເຈົ້າໄດ້ເວົ້າວ່າ ພວກເຮົາຈະບໍ່ຟັງ.
[18] ດ້ວຍເຫດນີ້ ຊາດຕ່າງໆ ເອີຍ ຈົ່ງຟັງ
ແລະຮັບຮູ້ເຖີ້ນວ່າອັນໃດຈະເກີດຂຶ້ນແກ່ໄພ່ພົນຂອງເຮົາ.

19 ໂລກເອີຍຈົ່ງຟັງເທີ້ນ ເຮົາຈະນຳເອົາໄພພິບັດມາຍັງປະຊາຊົນເຫລົ່ານີ້
ຄືໄພພິບັດທີ່ພວກເຂົາສົມຄວນຈະໄດ້ຮັບ
ເພາະວ່າພວກເຂົາບໍ່ເຊື່ອຟັງຖ້ອຍຄຳຂອງເຮົາ
ແລະບໍ່ສົນໃຈເຊື່ອຟັງຄຳສອນຂອງເຮົາ.
20 ຈະເປັນປະໂຫຍດອັນໃດແກ່ເຮົາ
ທີ່ໄດ້ທູບຫອມມາແຕ່ເມືອງ ເຊບາ
ຫລືໄດ້ເຄື່ອງຫອມມາຈາກທາງໄກ
ເຮົາກໍຈະບໍ່ຍິນດີເອົາເຄື່ອງບູຊາຂອງພວກເຂົາ.
21 ດັ່ງນັ້ນ ເຮົາພຣະຜູ້ເປັນເຈົ້າຈະເຮັດໃຫ້ຄົນເຫລົ່ານີ້ຕຳສະດຸດ
ພໍ່ ແລະລູກທັງຫລາຍຂອງພວກເຂົາຈະຕາຍ
ມິດສະຫາຍ ແລະເພື່ອນບ້ານກໍຈະຕາຍຄືກັນ.”

## ການບຸກລຸກຈາກທາງທິດເໜືອ

22 ພຣະຜູ້ເປັນເຈົ້າຊົງກ່າວວ່າ,
“ປະຊາຊົນຈະມາຈາກປະເທດທາງທິດເໜືອ
ຊາດຍິ່ງໃຫຍ່ທີ່ຢູ່ຫ່າງໄກກຳລັງຕຽມຕົວມາຕໍ່ສູ້.
23 ພວກເຂົາຖືໜ້າທະນູ ແລະຫອກ
ເປັນຄົນໂຫດຮ້າຍຂາດເມດຕາຈິດ
ພວກເຂົາຂີ່ມ້າ ແລະຮ້ອງສຽງດັງເໝືອນສຽງຄື້ນທະເລ
ແລະຕຽມພ້ອມສຳລັບຮົບເສິກຕໍ່ສູ້ເມືອງຊີໂອນ.”
24 ປະຊາຊົນ ເຢຣູຊາເລັມ ໄດ້ເວົ້າວ່າ, “ເມື່ອພວກເຮົາໄດ້ຍິນຂ່າວນັ້ນ
ມືຂອງພວກເຮົາໄດ້ອ່ອນເພຍ ມີຄວາມຢ້ານກົວ
ແລະເຈັບປວດເໝືອນຜູ້ຍິງຈະອອກລູກ.
25 ພວກເຮົາບໍ່ກ້າອອກໄປຕາມບ້ານນອກ
ຫລືຍ່າງໄປຕາມຖະໜົນຫົນທາງ
ເພາະວ່າສັດຕູໄດ້ຕຽມໂຈມຕີຢູ່
ແລະຄວາມຢ້ານກົວກໍມີຢູ່ທຸກດ້ານ.”
26 ພຣະຜູ້ເປັນເຈົ້າຊົງກ່າວວ່າ,
“ໄພ່ພົນຂອງເຮົາເອີຍ ຈົ່ງນຸ່ງເຄື່ອງໄວ້ທຸກ
ແລະກິ້ງເກືອກຢູ່ໃນຂີ້ເທົ່າໄຟ
ຈົ່ງຮ້ອງໄຫ້ດ້ວຍຄວາມຂົມຂື່ນເໝືອນລູກຊາຍຄົນດຽວຕາຍ
ເພາະວ່າຜູ້ທຳລາຍຈະເຂົ້າໂຈມຕີໃນທັນທີທັນໃດໂລດ.
27 ເຢເຣມີຢາ ເອີຍ ຈົ່ງໄປທົດລອງເບິ່ງໄພ່ພົນຂອງເຮົາ
ແລະສຶກສາເບິ່ງຄວາມປະພຶດຂອງເຂົາເບິ່ງດູ.

28 ພວກເຂົາທັງປວງເປັນກະບົດທີ່ດື້ດ້ານ
ເປັນຄົນມັກກ່າວຂວັນນິນທາຄົນອື່ນ
ພວກເຂົາຫົວແຂງເໝືອນທອງເຫລືອງແລະເຫລັກກ້າ
ເປັນຄົນສໍ້ໂກງທັງນັ້ນ.
29 ເຕົາເຜົາເງິນກໍຮ້ອນແຮງແລ້ວ
ແຕ່ສິ່ງບໍ່ດີທີ່ປົນຢູ່ນຳເງິນໄດ້ເປື່ອຍສູນໄປ
ວຽກນັ້ນຈຶ່ງບໍ່ເປັນປະໂຫຍດ
ຄົນຊົ່ວກໍຢ່າງດຽວກັນ ຄືຍັງບໍ່ໄດ້ສູນຫາຍໄປເລີຍ.
30 ຄົນທັງປວງຈະເອີ້ນເຂົາເຈົ້າວ່າເປັນເງິນໃຊ້ບໍ່ໄດ້
ເພາະວ່າເຮົາພຣະຜູ້ເປັນເຈົ້າໄດ້ປະຖິ້ມພວກເຂົາແລ້ວ.”

# ບົດທີ 7

## ເຢເຣມີຢາເທດສະໜາໃນພຣະວິຫານ

1ພຣະຜູ້ເປັນເຈົ້າໄດ້ຊົງໃຊ້ເຢເຣມີຢາໄປຍັງປະຕູພຣະວິຫານ ບ່ອນປະຊາຊົນຢູດາໄປຂາບ
ໄຫວ້ 2ພຣະອົງຊົງບອກເຢເຣມີຢາໃຫ້ຢືນຢູ່ໃນທີ່ນັ້ນ ແລ້ວໃຫ້ປະກາດພຣະໂອວາດຂອງພຣະ-
ຜູ້ເປັນເຈົ້າອົງຍິ່ງໃຫຍ່ວ່າ, 3“ພຣະເຈົ້າຂອງຊາວອິສຣາເອນຊົງກ່າວດັ່ງນີ້: ຈົ່ງປ່ຽນທາງດຳ-
ເນີນຊີວິດ ແລະການກະທຳຂອງພວກເຈົ້າເສຍ ເພື່ອເຮົາຈະໃຫ້ເຈົ້າອາໄສຢູ່ໃນທີ່ນີ້. 4ຢ່າເຊື່ອ
ຄຳຕົວະທີ່ວ່າ ນີ້ແມ່ນພຣະວິຫານຂອງພຣະຜູ້ເປັນເຈົ້າ ແມ່ນພຣະວິຫານຂອງພຣະຜູ້ເປັນເຈົ້າ
ແມ່ນພຣະວິຫານຂອງພຣະຜູ້ເປັນເຈົ້າ. 5ຈົ່ງປ່ຽນທາງດຳເນີນຊີວິດ ແລະການກະທຳຂອງພວກ
ເຈົ້າເສຍ ໃຫ້ເຮັດຕໍ່ກັນແລະກັນຢ່າງຍຸດຕິທຳ. 6ຢ່າເອົາປຽບຄົນຕ່າງດ້າວ ພ້ອມທັງລູກກຳພ້າ
ແລະແມ່ໝ້າຍ ໃຫ້ຢຸດປະຫັດປະຫານຜູ້ບໍ່ມີຄວາມຜິດໃນສະຖານທີ່ສັກສິດນີ້ ແລະຢຸດຂາບໄຫວ້
ພະອື່ນເສຍ ເພາະວ່າການກະທຳເຊັ່ນນີ້ຈະເປັນການທຳລາຍພວກເຈົ້າເອງ. 7ແລ້ວເຮົາຈະໃຫ້
ພວກເຈົ້າອາໄສຢູ່ໃນທີ່ນີ້ຕໍ່ໄປ ຄື ຢູ່ໃນດິນແດນທີ່ເຮົາໄດ້ຍົກໃຫ້ບັນພະບູລຸດຂອງພວກເຈົ້າ ເປັນ
ເຈົ້າຂອງຕະຫລອດໄປເປັນນິດນັ້ນ.

8-9ເບິ່ງແມ ພວກເຈົ້າໄດ້ໄວ້ໃຈໃນຄຳຕົວະ ລັກສິ່ງຂອງ ຂ້າຄົນ ລ່ວງເກີນຜົວເມຍຜູ້ອື່ນ ສາ
ບົດສາບານດ້ວຍຄຳບໍ່ຈິງ ຖວາຍບູຊາແກ່ພະບາອານ ແລະຂາບໄຫວ້ພະອື່ນທີ່ພວກເຈົ້າບໍ່ຮູ້ຈັກ.
10ເຮັດແຕ່ສິ່ງທີ່ເຮົາກຽດຊັງ ແລະມາຢືນຢູ່ຕໍ່ໜ້າເຮົາໃນພຣະວິຫານຂອງເຮົາ ແລ້ວກໍເວົ້າວ່າ
ພວກເຮົາປອດໄພແລ້ວ. 11ພວກເຈົ້າຄິດວ່າພຣະວິຫານຂອງເຮົາເປັນບ່ອນຫລົບລີ້ຂອງພວກເຈົ້າ
ຊັ້ນບໍ? ເຮົາໄດ້ເຫັນສິ່ງທີ່ພວກເຈົ້າກະທຳແລ້ວ ເຮົາພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ແຫລະ. 12ຈົ່ງ
ໄປຍັງເມືອງຊີໂລ ບ່ອນທີ່ເຮົາເລືອກໄວ້ເປັນບ່ອນຂາບໄຫວ້ແຕ່ກ່ອນ ແລ້ວຈົ່ງເບິ່ງສິ່ງທີ່ເຮົາໄດ້
ກະທຳຕໍ່ເມືອງນັ້ນ ຍ້ອນຄວາມຊົ່ວຂອງພວກອິສຣາເອນໄພ່ພົນຂອງເຮົາ. 13ພວກເຈົ້າໄດ້ເຮັດ
ບາບທີ່ເຮົາໄດ້ກ່າວນີ້ທັງໝົດ ເຖິງແມ່ນເຮົາໄດ້ເວົ້າກັບພວກເຈົ້າຫລາຍເທື່ອຫລາຍທີແລ້ວກໍດີ
ພວກເຈົ້າກໍຍັງບໍ່ຍອມຟັງ ແລະເມື່ອເຮົາເອີ້ນພວກເຈົ້າ ພວກເຈົ້າກໍບໍ່ຕອບ ເຮົາພຣະຜູ້ເປັນເຈົ້າ

ໄດ້ກ່າວດັ່ງນີ້ແຫລະ. 14ດ້ວຍເຫດນີ້ ເຮົາຈະກະທຳຕໍ່ບ່ອນທີ່ເຮົາໄດ້ຍົກໃຫ້ບັນພະບູລຸດຂອງເຈົ້າ
ຄືພຣະວິຫານທີ່ພວກເຈົ້າໄດ້ອາໄສຢູ່ນີ້ ເໝືອນກັບໄດ້ກະທຳທີ່ເມືອງຊີໂລນັ້ນ. 15ຈະຂັບໄລ່ພວກ
ເຈົ້າອອກໄປຈາກສາຍພຣະເນດຂອງເຮົາ ເໝືອນໄດ້ກະທຳຕໍ່ຊາວເອຟຣາຢິມ ຍາດພີ່ນ້ອງຂອງ
ພວກເຈົ້ານັ້ນ.

## ຄວາມບໍ່ເຊື່ອຟັງຂອງປະຊາຊົນ

16ເຢເຣມີຢາເອີຍ ເຈົ້າຢ່າອ້ອນວອນສຳລັບປະຊາຊົນເຫລົ່ານີ້ ຢ່າຮ້ອງໄຫ້ ຫລືອ້ອນວອນຂໍ
ເພື່ອພວກເຂົາ ຢ່າຂໍການອະໄພໂທດນຳເຮົາ ເພາະວ່າເຮົາຈະບໍ່ຟັງເຈົ້າ. 17ເຈົ້າບໍ່ເຫັນສິ່ງທີ່ພວກ
ເຂົາທັງຫລາຍກຳລັງກະທຳໃນເມືອງທັງຫລາຍຂອງຢູດາ ແລະຕາມຖະໜົນໃນນະຄອນເຢຣູ-
ຊາເລັມບໍ? 18ຄື ພວກເດັກນ້ອຍກໍເກັບເອົາຟືນ ພວກຜູ້ຊາຍກໍດັງໄຟ ແລະພວກຜູ້ຍິງກໍນວດ
ແປ້ງ ເຮັດເຂົ້າໜົມຫວານຖວາຍເຈົ້າຍິງເທິງສະຫວັນຊັ້ນຟ້າ ພວກເຂົາໄດ້ເທເຄື່ອງດື່ມຖວາຍແກ່
ພະອື່ນ ເພື່ອເຮັດໃຫ້ເຮົາເສຍໃຈ. 19ແມ່ນເຮົາແທ້ບໍເປັນຜູ້ໄດ້ຮັບຄວາມເສຍໃຈ? ເຮົາກ່າວວ່າ ບໍ່
ແມ່ນເຮົາດອກ ມັນແມ່ນພວກເຂົາເອງເປັນຜູ້ເສຍໃຈ ແລະຈະນຳຄວາມອັບອາຍມາສູ່ພວກເຂົາ
ເອງ. 20ດ້ວຍເຫດນັ້ນ ເຮົາພຣະຜູ້ເປັນເຈົ້າຈະເທຄວາມຮ້າຍອັນຮຸນແຮງຂອງເຮົາລົງໃສ່ບ່ອນນີ້
ຈະເທລົງໃສ່ທັງຄົນ ສັດເດຍລະສານ ຕົ້ນໄມ້ ແລະເຄື່ອງປູກ ຄວາມຮ້າຍຂອງເຮົາຈະລຸກໄໝ້
ເໝືອນໄຟ ຊຶ່ງບໍ່ມີໃຜຈະມອດໄດ້.

21ໄພ່ພົນຂອງເຮົາເອີຍ ໃຫ້ພວກເຈົ້າກິນເຄື່ອງເຜົາບູຊາເໝືອນກິນເຄື່ອງບູຊາອື່ນໆ ນັ້ນເສຍ
ເຮົາພຣະຜູ້ເປັນເຈົ້າຜູ້ມີອຳນາດຍິ່ງໃຫຍ່ຂອງຊາວອິສຣາເອນໄດ້ກ່າວດັ່ງນີ້ແຫລະ. 22ເມື່ອເຮົາ
ນຳບັນພະບູລຸດຂອງພວກເຈົ້າອອກຈາກປະເທດເອຢິບນັ້ນ ເຮົາບໍ່ໄດ້ໃຫ້ຄຳສັ່ງກ່ຽວກັບເຄື່ອງ
ເຜົາບູຊາ ຫລືເຄື່ອງບູຊາຊະນິດອື່ນໆ ແກ່ພວກເຂົາເລີຍ. 23ແຕ່ໄດ້ສັ່ງພວກເຂົາໃຫ້ເຊື່ອຟັງເຮົາ
ເພື່ອເຮົາຈະໄດ້ເປັນພຣະເຈົ້າຂອງພວກເຂົາ ແລະພວກເຂົາຈະໄດ້ເປັນໄພ່ພົນຂອງເຮົາ ເຮົາໄດ້
ບອກພວກເຂົາໃຫ້ປະພຶດຕາມທາງທີ່ໄດ້ສັ່ງນັ້ນ ເພື່ອສິ່ງທັງຫລາຍຈະໄດ້ເປັນຜົນດີແກ່ພວກເຂົາ.
24ແຕ່ພວກເຂົາບໍ່ເຊື່ອຟັງ ຫລືເອົາໃຈໃສ່ເລີຍ ມີແຕ່ປະພຶດໄປຕາມທາງຄວາມດື້ດ້ານ ແລະໃຈ
ຊົ່ວຂອງເຂົາເອງ. 25ສະນັ້ນ ພວກເຂົາຈຶ່ງຊົ່ວໜັກລົງແທນທີ່ຈະດີຂຶ້ນ ຕັ້ງແຕ່ມື້ທີ່ບັນພະບູລຸດ
ຂອງພວກເຈົ້າອອກຈາກເອຢິບຈົນເຖິງທຸກມື້ນີ້ ເຮົາໄດ້ໃຊ້ບັນດາພວກຜູ້ປະກາດພຣະທຳຂອງ
ເຮົາໄປຫາພວກເຈົ້າຢູ່ສະເໝີ. 26ແຕ່ພວກເຈົ້າບໍ່ເຊື່ອຟັງ ຫລືເອົາໃຈໃສ່ເລີຍ ແຮງເປັນຄົນຫົວດື້
ແລະປະພຶດຊົ່ວກວ່າບັນພະບູລຸດຂອງພວກເຈົ້າອີກ.

27ດ້ວຍເຫດນີ້ ເຢເຣມີຢາເອີຍ ເຈົ້າຈະເວົ້າຖ້ອຍຄຳເຫລົ່ານີ້ສູ່ເຂົາຟັງ ແຕ່ພວກເຂົາຈະບໍ່ຟັງ
ຈະເອີ້ນພວກເຂົາແຕ່ພວກເຂົາຈະບໍ່ຕອບ. 28ເຈົ້າຈະບອກວ່າພວກເຂົາເປັນຊົນຊາດທີ່ບໍ່ເຊື່ອຟັງ
ເຮົາ ທັງບໍ່ຍອມຮັບເອົາຄວາມຕັກເຕືອນຂອງເຮົາ ຄວາມສັດຊື່ໄດ້ສູນຫາຍໄປຈາກພວກເຂົາ
ພວກເຂົາບໍ່ເວົ້າເຖິງຄວາມສັດຊື່ອີກເລີຍ.

## ການເຮັດບາບໃນຮ່ອມພູຮິນໂນມ

29 ປະຊາຊົນເຢຣູຊາເລັມເອີຍ ຈົ່ງຮ້ອງໄຫ້ເສຍໃຈແລະໄວ້ທຸກເທີ້ນ
ຈົ່ງແຖຜົມຂອງພວກເຈົ້າຖິ້ມເສຍ ແລະຈົ່ງຮ້ອງໄຫ້

ອາໄລຢູ່ເທິງຈອມພູ
ເພາະວ່າເຮົາ ພຣະຜູ້ເປັນເຈົ້າ ໄດ້ປະຖິ້ມປະຊາຊົນເຫລົ່ານີ້
ດ້ວຍຄວາມຮ້າຍຂອງເຮົາ.

[30]ປະຊາຊົນຢູດາ ໄດ້ກະທຳສິ່ງທີ່ຊົ່ວຮ້າຍ ພວກເຂົາໄດ້ເອົາຮູບພະຂອງຕົນທີ່ເຮົາກຽດຊັງມາ
ວາງໄວ້ໃນວິຫານຂອງເຮົາ ເຮັດໃຫ້ວິຫານນັ້ນເສື່ອມເສຍ ເຮົາ ພຣະຜູ້ເປັນເຈົ້າ ໄດ້ກ່າວດັ່ງນີ້
ແຫລະ.

[31]ພວກເຂົາໄດ້ສ້າງແທ່ນບູຊາຊຶ່ງເອີ້ນວ່າ ໂຕເຟັດ ໄວ້ໃນຮ່ອມພູເບັນ ຮິນໂນມ ເພື່ອຈະໄດ້
ເອົາລູກຊາຍຍິງຂອງຕົນມາເຜົາບູຊາ ເຮົາບໍ່ເຄີຍນຶກບໍ່ເຄີຍສັ່ງໃຫ້ເຂົາກະທຳຢ່າງນີ້ເລີຍ. [32]ດ້ວຍ
ເຫດນີ້ ເວລານັ້ນຈະຕ້ອງມາເຖິງແນ່ນອນ ເມື່ອນັ້ນຈະບໍ່ໄດ້ເອີ້ນວ່າ ໂຕເຟັດ ຫລືຮ່ອມພູເບັນ
ຮິນໂນມ ອີກຕໍ່ໄປ ແຕ່ຈະໄດ້ເອີ້ນວ່າຮ່ອມພູແຫ່ງການຂ້າຟັນກັນ [33]ເພາະວ່າພວກເຂົາຈະໄດ້ຝັງ
ສົບຄົນໄວ້ໃນ ໂຕເຟັດ ຈົນບໍ່ມີບ່ອນຝັງ ແຜ່ນດິນນັ້ນຈະກາຍເປັນຖິ່ນແຫ້ງແລ້ງກັນດານ. [34]ເຮົາ
ຈະເຮັດໃຫ້ສຽງຂອງຄວາມມ່ວນຊື່ນຍິນດີ ແລະສຽງຂອງເຈົ້າບ່າວເຈົ້າສາວໃນເມືອງທັງຫລາຍ
ຂອງຊາວຢູດາ ແລະໃນຖະໜົນນະຄອນ ເຢຣູຊາເລັມ ສິ້ນສຸດລົງ.”

# ບົດທີ 8

## ຄວາມບາບ ແລະການທໍລະຍົດຂອງຢູດາ

[1]“ພຣະຜູ້ເປັນເຈົ້າ ກ່າວວ່າ ໃນເທື່ອນັ້ນ ກະດູກຂອງບັນດາກະສັດຢູດາ ກະດູກເຈົ້ານາຍ
ກະດູກປະໂລຫິດ ກະດູກຜູ້ປະກາດພຣະທຳ ແລະກະດູກຂອງຊາວເມືອງ ເຢຣູຊາເລັມ ຈະມີຄົນ
ເອົາອອກມາຈາກອຸບໂມງຂອງພວກເຂົາທັງຫລາຍ [2]ພວກເຂົາຈະກະຈາຍກະດູກເຫລົ່ານັ້ນອອກ
ຕໍ່ໜ້າດວງຕາເວັນ ດວງເດືອນ ແລະບໍລິວານແຫ່ງຟ້າສະຫວັນທັງໝົດ ຊຶ່ງພວກເຂົາຮັກ ແລະ
ບົວລະບັດ ຊຶ່ງພວກເຂົາໄດ້ຕິດສອຍຫ້ອຍຕາມ ຊຶ່ງພວກເຂົາໄດ້ສະແຫວງຫາ ແລະນະມັດສະ-
ການ ຈະບໍ່ມີໃຜຮວບຮວມ ຫລືຝັງກະດູກເຫລົ່ານີ້ ແຕ່ຈະເປັນເໝືອນຂີ້ສັດຢູ່ຕາມພື້ນດິນ [3]ບັນ-
ດາຄົນທີ່ເຫລືອຢູ່ຈາກຄອບຄົວຮ້າຍນີ້ ຊຶ່ງຕົກຄ້າງຢູ່ໃນສະຖານທີ່ທັງໝົດທີ່ເຮົາໄດ້ຂັບໄລ່ພວກ
ເຂົາໄປ ຈະເລືອກຄວາມຕາຍຫລາຍກວ່າທີ່ຈະມີຊີວິດຢູ່ ພຣະຜູ້ເປັນເຈົ້າ ຈອມໂຍທາກ່າວດັ່ງນີ້

[4]ເຈົ້າຈົ່ງເວົ້າກັບພວກເຂົາວ່າ ພຣະຜູ້ເປັນເຈົ້າ ກ່າວດັ່ງນີ້ວ່າ ເມື່ອມະນຸດລົ້ມລົງ ຕົນຈະບໍ່ລຸກ-
ຂຶ້ນອີກບໍ ຖ້າຜູ້ໜຶ່ງຜູ້ໃດຫັນໄປ ຕົນຈະບໍ່ຖອຍຫລັງກັບມາບໍ [5]ເປັນຫຍັງຊາວ ເຢຣູຊາເລັມ ນີ້ຈຶ່ງ
ໄດ້ຫັນໄປ ເປັນການດື້ດ້ານຢູ່ເປັນນິດ ພວກເຂົາຍຶດການຫລອກລວງໄວ້ໝັ້ນ ພວກເຂົາປະຕິ-
ເສດບໍ່ຍອມກັບໃຈ [6]ເຮົາໄດ້ຕັ້ງໃຈ ແລະຄອຍຖ້າຟັງ ແຕ່ພວກເຂົາກໍເວົ້າບໍ່ຖືກຕ້ອງ ບໍ່ມີຄົນໃດ
ກັບໃຈຈາກຄວາມຊົ່ວຂອງຕົນ ກ່າວວ່າ ‘ຂ້ອຍໄດ້ເຮັດຫຍັງໄປແລ້ວ’ ທຸກຄົນຫັນໄປຕາມທາງ
ຂອງຕົນເອງ ເໝືອນກັບມ້າແລ່ນຫົວສັກເຂົ້າໄປໃນສົງຄາມ [7]ເຖິງວ່ານົກຍາງເທິງຟ້າຍັງຮູ້ຈັກ
ເວລາກຳນົດຂອງມັນ ແລະນົກເຂົາ ນົກນາງແອ່ນ ແລະນົກກຽນ ໄດ້ຮັກສາເວລາຂອງມັນ ແຕ່
ປະຊາຊົນຂອງເຮົາບໍ່ຮູ້ຈັກຄຳຕັດສິນຂອງ ພຣະຜູ້ເປັນເຈົ້າ [8]ເຈົ້າຈະເວົ້າໄດ້ຢ່າງໃດວ່າ ‘ເຮົາມີ
ປັນຍາ ແລະພຣະບັນຍັດຂອງ ພຣະຜູ້ເປັນເຈົ້າ ກໍຢູ່ກັບເຮົາ’ ແຕ່ເບິ່ງແມ ແນ່ນອນເຂົາເຮັດຢ່າງ

ບໍ່ມີປະໂຫຍດ ຄືປາກກາຂອງພວກອາລັກໄດ້ເຮັດຢ່າງບໍ່ມີປະໂຫຍດ 9ຄົນມີປັນຍາຈະໄດ້ຮັບ
ຄວາມອັບອາຍ ພວກເຂົາຈະຕົກໃຈຢ້ານ ແລະຖືກຈັບຕົວໄປ ເບິ່ງແມ ພວກເຂົາໄດ້ປະຕິເສດ
ພຣະທຳຂອງພຣະຜູ້ເປັນເຈົ້າ ແລະປັນຍາຢ່າງໃດຈະມີໃນຕົວເຂົາເຈົ້າ 10ເພາະສະນັ້ນ ເຮົາຈະ
ໃຫ້ເມຍຂອງພວກເຂົາຕົກໄປເປັນຂອງຄົນອື່ນ ໃຫ້ໄຮ່ນາຂອງພວກເຂົາຕົກແກ່ຜູ້ທີ່ຈະໄດ້ຮັບເປັນ
ມໍລະດົກ ເພາະວ່າຕັ້ງແຕ່ຄົນທີ່ຕ່ຳຕ້ອຍທີ່ສຸດເຖິງຄົນທີ່ໃຫຍ່ໂຕທີ່ສຸດ ທຸກຄົນໂລບຢາກໄດ້ກຳ-
ໄລ ຕັ້ງແຕ່ຜູ້ປະກາດພຣະທຳເຖິງປະໂລຫິດ ທຸກຄົນກໍເຮັດການສໍ້ໂກງ 11ພວກເຂົາໄດ້ຮັກສາ
ບາດແຜແຫ່ງບຸດສາວປະຊາຊົນຂອງເຮົາແຕ່ພຽງເລັກນ້ອຍ ກ່າວວ່າ ‘ສັນຕິສຸກ ສັນຕິສຸກ’ ໃນ
ເມື່ອບໍ່ມີສັນຕິສຸກເລີຍ 12ເມື່ອພວກເຂົາເຮັດການໜ້າກຽດຊັງ ພວກເຂົາອັບອາຍບໍ? ບໍ່ເລີຍ
ພວກເຂົາບໍ່ອັບອາຍເລີຍ ພວກເຂົາບໍ່ຮູ້ຈັກວ່າຢ່າງໃດຈຶ່ງຈະຂາຍໜ້າ ເພາະສະນັ້ນ ພວກເຂົາຈະ
ລົ້ມລົງທ່າມກາງພວກທີ່ລົ້ມແລ້ວ ເມື່ອເຮົາລົງໂທດເຂົາທັງຫລາຍ ພວກເຂົາຈະລົ້ມລົງ ພຣະຜູ້-
ເປັນເຈົ້າກ່າວດັ່ງນີ້ແຫລະ 13ພຣະຜູ້ເປັນເຈົ້າກ່າວວ່າ ເຮົາຈະຜານພວກເຂົາ ເຄືອອະງຸ່ນຈະບໍ່ມີ
ຜົນ ຫລືຕົ້ນໝາກເດື່ອເທດບໍ່ມີຜົນ ໃບກໍຈະຫ່ຽວແຫ້ງໄປ ແລະສິ່ງໃດທີ່ເຮົາໃຫ້ພວກເຂົາກໍຈະ
ສູນຫາຍໄປຈາກພວກເຂົາ”
14ເປັນຫຍັງເຮົາຈຶ່ງນັ່ງຢູ່ເສີຍ ຈົ່ງພາກັນມາ ໃຫ້ເຮົາເຂົ້າໄປໃນຫົວເມືອງທີ່ມີປ້ອມ ແລະພິ-
ນາດຢູ່ບ່ອນນັ້ນສາ ເພາະພຣະຜູ້ເປັນເຈົ້າພຣະເຈົ້າຂອງເຮົາຈະຊົງໃຫ້ເຮົານັ່ງງຽບ ແລະຊົງ
ປະທານນ້ຳບີໝີໃຫ້ເຮົາດື່ມ ເພາະເຮົາໄດ້ເຮັດບາບຕໍ່ພຣະຜູ້ເປັນເຈົ້າ 15ເຮົາຊອກຫາສັນຕິສຸກ
ແຕ່ບໍ່ມີຄວາມດີຫຍັງມາເລີຍ ເຮົາຊອກຫາເວລາຮັກສາໃຫ້ຫາຍ ແຕ່ກັບປະສົບຄວາມຕື່ນຕົກໃຈ
16“ສຽງຄຶກຄະນອງແຫ່ງມ້າຂອງລາວກໍໄດ້ຍິນມາຈາກເມືອງດານ ແຜ່ນດິນທັງໝົດກໍຫວັ່ນໄຫວ
ດ້ວຍສຽງຮ້ອງຂອງກອງທັບມ້າຂອງລາວ ມັນທັງຫລາຍມາກິນແຜ່ນດິນແລະສິ່ງທັງປວງທີ່ຢູ່ໃນ
ນັ້ນຈົນໝົດ ທັງເມືອງ ແລະຜູ້ທີ່ອາໄສຢູ່ໃນເມືອງ
17ເພາະ ເບິ່ງແມ ເຮົາຈະສົ່ງງູເຂົ້າມາທ່າມກາງເຈົ້າ ຄືງູພິດຊຶ່ງຈະຜູກມັດດ້ວຍມົນບໍ່ໄດ້ ແລະ
ມັນຈະກັດເຈົ້າທັງຫລາຍ” ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ
18ເມື່ອຂ້າພະເຈົ້າຈະເລົ້າໂລມຕົວເອງເນື່ອງດ້ວຍຄວາມເສົ້າໂສກ ຈິດໃຈຂອງຂ້າພະເຈົ້າກໍ
ອ່ອນກຳລັງຢູ່ພາຍໃນ 19ຟັງດູ ສຽງຮ້ອງແຫ່ງບຸດສາວປະຊາຊົນຂອງຂ້າພະເຈົ້າ ເພາະຄົນທີ່
ອາໄສຢູ່ໃນແຜ່ນດິນຫ່າງໄກ “ພຣະຜູ້ເປັນເຈົ້າບໍ່ໄດ້ສະຖິດໃນຊີໂອນບໍ ກະສັດຂອງເມືອງນັ້ນບໍ່
ຢູ່ໃນນັ້ນບໍ” “ເປັນຫຍັງພວກເຂົາຈຶ່ງຍົວະໃຫ້ເຮົາຮ້າຍດ້ວຍຮູບເຄົາລົບຂອງພວກເຂົາ ແລະດ້ວຍ
ພະຕ່າງດ້າວຂອງພວກເຂົາ” 20“ລະດູກ່ຽວກໍຜ່ານໄປ ລະດູແລ້ງກໍສິ້ນສຸດລົງແລ້ວ ແລະເຮົາທັງ-
ຫລາຍກໍບໍ່ລອດພົ້ນ” 21ເພາະບາດແຜແຫ່ງບຸດສາວປະຊາຊົນຂອງຂ້າພະເຈົ້າ ຫົວໃຈຂ້າພະເຈົ້າ
ຈຶ່ງເປັນແຜ ຂ້າພະເຈົ້າເສົ້າໝອງ ແລະຄວາມຕື່ນຕົກໃຈກໍຍຶດຂ້າພະເຈົ້າໄວ້ໝັ້ນ 22ບໍ່ມີຫວ້ານຢາ
ທາໃນກີເລອາດບໍ ບໍ່ມີແພດໝໍໃນບ່ອນນັ້ນບໍ ເປັນຫຍັງສຸຂະພາບແຫ່ງບຸດສາວປະຊາຊົນຂອງ
ຂ້າພະເຈົ້າຈຶ່ງບໍ່ກັບສູ່ສະພາບເດີມໄດ້

# ບົດທີ 9

## ການບໍ່ເຊື່ອຟັງພຣະເຈົ້ານຳເອົາການພິພາກສາມາສູ່ຢູດາ

1ໂອ ຖ້າຫົວຂອງຂ້າພະເຈົ້າເປັນນ້ຳ ແລະດວງຕາຂອງຂ້າພະເຈົ້າເປັນບໍ່ນ້ຳພຸກໍຈະດີ ເພື່ອ
ຂ້າພະເຈົ້າຈະໄດ້ຮ້ອງໄຫ້ທັງກາງເວັນ ແລະກາງຄືນ ເພາະບຸດສາວປະຊາຊົນຂອງຂ້າພະເຈົ້າທີ່
ຖືກຂ້າ 2ໂອ ຖ້າຂ້າພະເຈົ້າມີບ່ອນພັກສຳລັບຄົນເດີນທາງຢູ່ໃນຖິ່ນແຫ້ງແລ້ງກັນດານກໍຈະດີ
ເພື່ອຂ້າພະເຈົ້າຈະໄດ້ຫວິດຈາກຊົນຊາດຂອງຂ້າພະເຈົ້າ ແລະໄປໃຫ້ພົ້ນຈາກພວກເຂົາເສຍ
ເພາະພວກເຂົາທັງຫລາຍເປັນຄົນລ່ວງປະເວນີທັງໝົດ ແລະເປັນໝູ່ຄົນທີ່ມັກທໍລະຍົດ

3"ພວກເຂົາງໍລີ້ນຂອງຕົນເໝືອນກັບຄັນທະນູເພື່ອກ່າວຄວາມບໍ່ຈິງ ແຕ່ບໍ່ກ້າສູ້ເພື່ອຄວາມຈິງ
ໃນແຜ່ນດິນ ເພາະພວກເຂົາຈາກຄວາມຊົ່ວເຊັ່ນນີ້ໄປສູ່ຄວາມຊົ່ວເຊັ່ນນັ້ນ ແລະບໍ່ຮູ້ຈັກເຮົາ"
**ພຣະຜູ້ເປັນເຈົ້າ**ກ່າວດັ່ງນີ້ແຫລະ 4"ຂໍໃຫ້ທຸກຄົນລະວັງເພື່ອນບ້ານຂອງຕົນ ແລະຢ່າວາງໃຈໃນ
ພີ່ນ້ອງຄົນໃດເລີຍ ເພາະວ່າພີ່ນ້ອງທຸກຄົນຈະເປັນຄົນຫລອກລວງ ແລະເພື່ອນບ້ານທຸກຄົນຈະ
ທຽວໄປເປັນຄົນນິນທາ 5ທຸກຄົນຈະຫລອກລວງເພື່ອນບ້ານຂອງຕົວ ບໍ່ມີໃຜຈະເວົ້າຄວາມຈິງຈັກ
ຄົນດຽວ ພວກເຂົາໄດ້ສອນລີ້ນຂອງຕົນໃຫ້ເວົ້າຂີ້ຕົວະ ພວກເຂົາໄດ້ເຮັດຄວາມຊົ່ວຊ້າຈົນໝັກ-
ໜ່ວງ 6ເຈົ້າອາໄສຢູ່ທ່າມກາງການຫລອກລວງ ໂດຍການຫລອກລວງ ພວກເຂົາປະຕິເສດທີ່ຈະ
ຮູ້ຈັກເຮົາ" **ພຣະຜູ້ເປັນເຈົ້າ**ກ່າວດັ່ງນີ້ແຫລະ

7ເພາະສະນັ້ນ **ພຣະຜູ້ເປັນເຈົ້າ**ຈອມໂຍທາກ່າວດັ່ງນີ້ວ່າ "ເບິ່ງແມ ເຮົາຈະຫລອມພວກເຂົາ
ແລະທົດລອງເຂົາ ຍ້ອນບຸດສາວປະຊາຊົນຂອງເຮົາ ເຮົາຈະເຮັດຢ່າງອື່ນໄດ້ແນວໃດ 8ລີ້ນຂອງ
ພວກເຂົາເປັນລູກທະນູແຫ່ງຄວາມຕາຍ ມັນເວົ້າມານຍາ ເວົ້າຢ່າງສັນຕິກັບເພື່ອນບ້ານຂອງຕົນ
ດ້ວຍປາກ ແຕ່ໃນໃຈຂອງພວກເຂົາໄດ້ວາງແຜນການຄອຍຖ້າດັກຢູ່" 9**ພຣະຜູ້ເປັນເຈົ້າ**ກ່າວວ່າ
"ບໍ່ຄວນທີ່ເຮົາຈະລົງໂທດພວກເຂົາ ເພາະສິ່ງເຫລົ່ານີ້ບໍ ບໍ່ຄວນທີ່ຈິດໃຈເຮົາຈະແກ້ແຄ້ນປະຊາ-
ຊາດທີ່ເປັນຢ່າງນີ້ບໍ

10ເຮົາຈະຮ້ອງໄຫ້ ແລະຄວນຄາງຍ້ອນພູເຂົານັ້ນ ແລະຮ້ອງຄາງຍ້ອນເດີ່ນຫຍ້າໃນຖິ່ນແຫ້ງ-
ແລ້ງກັນດານ ເພາະວ່າມັນຖືກເຜົາເສຍ ບໍ່ມີຜູ້ໃດຜ່ານໄປມາ ບໍ່ໄດ້ຍິນສຽງສັດລ້ຽງຮ້ອງ ທັງນົກ
ໃນອາກາດ ແລະສັດໄດ້ໜີໄປເສຍແລ້ວ

11ເຮົາຈະເຮັດໃຫ້ເຢຣູຊາເລັມເປັນກອງສິ່ງຫັກພັງ ເປັນບ່ອນຢູ່ຂອງໝາປ່າ ແລະເຮົາຈະເຮັດ
ໃຫ້ຫົວເມືອງຂອງຢູດາເປັນບ່ອນຮ້າງເປົ່າ ບໍ່ມີຊາວເມືອງ"

12ໃຜເປັນຄົນມີປັນຍາທີ່ຈະເຂົ້າໃຈຄວາມນີ້ໄດ້ ແລະມີຜູ້ໃດທີ່ພຣະໂອດຂອງ**ພຣະຜູ້ເປັນເຈົ້າ**
ໄດ້ກ່າວແກ່ຕົນ ລາວຈຶ່ງປະກາດຄວາມນັ້ນໄດ້ ເຫດໃດແຜ່ນດິນຈຶ່ງພັງທະລາຍ ແລະຖືກເຜົາ
ເສຍເໝືອນຖິ່ນແຫ້ງແລ້ງກັນດານ ຈຶ່ງບໍ່ມີໃຜຜ່ານໄປມາ

13ແລະ**ພຣະຜູ້ເປັນເຈົ້າ**ກ່າວວ່າ "ເພາະພວກເຂົາທັງຫລາຍໄດ້ປະຖິ້ມບັນຍັດຂອງເຮົາ ຊຶ່ງ
ເຮົາໄດ້ຕັ້ງໄວ້ຕໍ່ໜ້າພວກເຂົາ ແລະບໍ່ໄດ້ເຊື່ອຟັງສຽງຂອງເຮົາ ຫລືດຳເນີນຕາມນັ້ນ 14ແຕ່ໄດ້
ດຳເນີນຕາມໃຈຂອງຕົນເອງຢ່າງດື້ດ້ານ ແລະຕິດສອຍຫ້ອຍຕາມພວກພະບາອານ ເໝືອນທີ່
ບັນພະບູລຸດໄດ້ສັ່ງສອນພວກເຂົາໄວ້" 15ເພາະສະນັ້ນ **ພຣະຜູ້ເປັນເຈົ້າ**ຈອມໂຍທາ ພຣະເຈົ້າ

ແຫ່ງອິສຣາເອນ ຈຶ່ງກ່າວວ່າ "ເບິ່ງແມ ເຮົາຈະລ້ຽງຊົນຊາດນີ້ດ້ວຍເຄືອເຂົາຮໍ ແລະໃຫ້ນໍ້າບີພິ
ແກ່ເຂົາດື່ມ [16]ເຮົາຈະກະຈາຍພວກເຂົາໄປທ່າມກາງປະຊາຊາດ ທີ່ຕົວເຂົາເອງ ແລະບັນພະບູ-
ລຸດຂອງພວກເຂົາບໍ່ຮູ້ຈັກ ແລະເຮົາຈະສົ່ງດາບໃຫ້ໄລ່ຕາມພວກເຂົາ ຈົນເຮົາຈະຜານພວກເຂົາ
ໝົດ"

## ການອ້ອນວອນໃຫ້ວາງໃຈໃນພຣະເຈົ້າ

[17]ພຣະຜູ້ເປັນເຈົ້າຈອມໂຍທາກ່າວດັ່ງນີ້ວ່າ "ຈົ່ງພິຈາລະນາເບິ່ງ ແລະເອີ້ນນາງຮ້ອງໄຫ້ໃຫ້
ມາ ຈົ່ງໃຫ້ຄົນໄປຕາມຍິງທີ່ຊໍານານມາ [18]ໃຫ້ພວກນາງຮີບສົ່ງສຽງຮ້ອງຄາງເພື່ອເຮົາທັງຫລາຍ
ເພື່ອນໍ້າຕາຈະອາບຕາຂອງເຮົາ ແລະໜັງຕາຂອງເຮົາຈະມີນໍ້າຕາພຸອອກມາ [19]ເພາະໄດ້ຍິນສຽງ
ຮ້ອງຄາງຈາກຊີໂອນວ່າ 'ເຮົາທັງຫລາຍຈິບຫາຍພຽງໃດແລ້ວ ເຮົາອັບອາຍຫລາຍ ເພາະເຮົາ
ໄດ້ປະຖິ້ມແຜ່ນດິນ ເພາະບ່ອນຢູ່ອາໄສຂອງເຮົາໄດ້ໂຍນພວກເຮົາອອກໄປ'"
[20]ຍິງເອີຍ ຈົ່ງຟັງພຣະທຳຂອງພຣະຜູ້ເປັນເຈົ້າ ແລະໃຫ້ຫູຂອງເຈົ້າຮັບພຣະທຳຈາກພຣະ-
ໂອດຂອງພຣະອົງ ຈົ່ງສອນບົດຮ້ອງຄາງແກ່ບຸດສາວຂອງເຈົ້າ ຈົ່ງສອນບົດເພງແຫ່ສົບແກ່
ເພື່ອນບ້ານຂອງນາງທຸກຄົນ [21]ເພາະຄວາມຕາຍໄດ້ຂຶ້ນມາເຂົ້າປ່ອງຢ້ຽມຂອງເຮົາ ມັນເຂົ້າມາ
ໃນວັງທັງຫລາຍຂອງເຮົາ ຕັດພວກເດັກນ້ອຍອອກເສຍຈາກຖະໜົນຫົນທາງ ແລະຕັດຄົນໜຸ່ມ
ອອກເສຍຈາກຖະໜົນທັງຫລາຍ [22]ຈົ່ງເວົ້າວ່າ "ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ 'ສົບມະນຸດຈະ
ຕົກລົງເໝືອນຂີ້ສັດຕົກຕາມພື້ນທົ່ງ ເໝືອນຟ່ອນເຂົ້າລົ້ມຕາມຜູ້ກ່ຽວ ແລະບໍ່ມີຜູ້ໃດຈະເກັບ'"
[23]ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ "ຢ່າໃຫ້ຜູ້ມີປັນຍາອວດໃນສະຕິປັນຍາຂອງຕົນ ຢ່າໃຫ້ຊາຍ-
ສະກັນອວດໃນຄວາມເຂັ້ມແຂງຂອງຕົນ ຢ່າໃຫ້ຄົນຮັ່ງມີອວດໃນຄວາມລໍ້າລວຍຂອງຕົນ [24]ແຕ່
ໃຫ້ຜູ້ອວດ ອວດໃນສິ່ງນີ້ຄືໃນການທີ່ຕົນເຂົ້າໃຈ ແລະຮູ້ຈັກເຮົາວ່າ ເຮົາຄືພຣະຜູ້ເປັນເຈົ້າ ຊຶ່ງ
ສະແດງຄວາມເມດຕາ ຄວາມຍຸດຕິທຳ ແລະຄວາມຊອບທຳໃນໂລກ ເພາະວ່າເຮົາພໍໃຈໃນສິ່ງ
ເຫລົ່ານີ້" ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ
[25]ພຣະຜູ້ເປັນເຈົ້າກ່າວວ່າ "ເບິ່ງແມ ວັນເວລາກຳລັງມາເຖິງແລ້ວ ເມື່ອເຮົາຈະລົງໂທດບັນ-
ດາຜູ້ທີ່ຮັບພິທີຕັດພ້ອມດ້ວຍຜູ້ທີ່ບໍ່ໄດ້ຮັບພິທີຕັດ ຄື [26]ເອຢິບ ຢູດາ ເອໂດມ ແລະຄົນອຳໂມນ
ໂມອາບ ແລະບັນດາຄົນທີ່ຢູ່ໃນມຸມທີ່ໄກທີ່ສຸດ ທຸກຄົນທີ່ອາໄສຢູ່ໃນຖິ່ນແຫ້ງແລ້ງກັນດານ
ເພາະບັນດາປະຊາຊາດເຫລົ່ານີ້ບໍ່ໄດ້ຮັບພິທີຕັດ ແລະບັນດາເຊື້ອສາຍອິສຣາເອນກໍບໍ່ໄດ້ຮັບພິທີ
ຕັດທາງໃຈ"

# ບົດທີ 10

## ພຣະເຈົ້າກັບບັນດາຮູບເຄົາລົບ

[1]ໂອ ເຊື້ອສາຍອິສຣາເອນເອີຍ ຈົ່ງຟັງພຣະທຳຊຶ່ງພຣະຜູ້ເປັນເຈົ້າກ່າວກັບເຈົ້າ
[2]ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ "ຢ່າຮຽນຮູ້ການດຳເນີນຊີວິດຕາມທາງແຫ່ງບັນດາປະຊາຊາດ
ຫລືຢ່າຢ້ານກົວເພາະໝາຍສຳຄັນຂອງທ້ອງຟ້າ ຕາມທີ່ບັນດາປະຊາຊາດຢ້ານກົວນັ້ນ [3]ເພາະ
ທຳນຽມຂອງຊົນຊາດທັງຫລາຍກໍບໍ່ມີປະໂຫຍດ ພວກເຂົາຕັດຕົ້ນໄມ້ມາຈາກປ່າຕົ້ນໜຶ່ງ ເປັນສິ່ງ

ທີ່ມີຊ່າງໄດ້ເຮັດດ້ວຍຂວານ [4]ພວກເຂົາທັງຫລາຍກໍເອົາເງິນ ແລະທອງມາປະດັບ ພວກເຂົາ
ຕອກໄວ້ແໜ້ນດ້ວຍຄ້ອນ ແລະຕະປູ ມັນຈຶ່ງເຄື່ອນໄຫວໄປມາບໍ່ໄດ້ [5]ມັນຕັ້ງຂຶ້ນເໝືອນຕົ້ນຕານ
ມັນເວົ້າບໍ່ໄດ້ ຄົນຕ້ອງຂົນໄປ ເພາະມັນຍ່າງບໍ່ໄດ້ ຢ່າຢ້ານມັນເລີຍ ເພາະມັນເຮັດຮ້າຍບໍ່ໄດ້
ເຮັດດີກໍບໍ່ໄດ້ດ້ວຍ"

[6]ຂ້າແດ່**ພຣະຜູ້ເປັນເຈົ້າ** ບໍ່ມີຜູ້ໃດເໝືອນພຣະອົງເລີຍ ພຣະອົງຊົງເປັນໃຫຍ່ ແລະພຣະນາມ
ຂອງພຣະອົງມີລິດຫລາຍ [7]ຂ້າແດ່ກະສັດແຫ່ງບັນດາປະຊາຊາດ ຜູ້ໃດຈະບໍ່ຢຳເກງພຣະອົງ
ເພາະພຣະອົງສົມຄວນແກ່ການເຊັ່ນນີ້ ເພາະໃນບັນດານັກປາດຂອງປະຊາຊາດ ແລະໃນບັນດາ
ລາຊະອານາຈັກທັງໝົດຂອງພວກເຂົາ ບໍ່ມີຜູ້ໃດເໝືອນພຣະອົງ [8]ພວກເຂົາທັງຫລາຍໂງ່ຈ້າ ໄມ້
ທ່ອນນັ້ນເປັນແຕ່ຄຳສອນບໍ່ມີປະໂຫຍດ [9]ເຄື່ອງເງິນຕີນັ້ນ ພວກເຂົາເອົາມາຈາກຕາຊິດ ແລະ
ເອົາທອງຄຳມາຈາກເມືອງອຸຟາດ ເປັນຜົນງານຂອງຊ່າງຝີມື ແລະເປັນຜົນນໍ້າມືຂອງຊ່າງຕີຄຳ
ເສື້ອຜ້າຂອງຮູບເຄົາລົບນັ້ນສີຄາມ ແລະສີມ່ວງ ເປັນຜົນງານຂອງຄົນຊຳນານທັງນັ້ນ [10]ແຕ່
**ພຣະຜູ້ເປັນເຈົ້າ**ເປັນ**ພຣະເຈົ້າ**ອົງທ່ຽງແທ້ ພຣະອົງຊົງເປັນ**ພຣະເຈົ້າ**ຜູ້ຊົງພຣະຊົນ ແລະເປັນ
ພຣະມະຫາກະສັດເນື່ອງນິດ ເມື່ອຊົງພຣະພິໂລດ ແຜ່ນດິນກໍຫວັ່ນໄຫວ ແລະບັນດາປະຊາຊາດ
ຈະທົນຕໍ່ຄວາມຮ້າຍຂອງພຣະອົງບໍ່ໄດ້ [11]ເຈົ້າຈົ່ງເວົ້າກັບພວກເຂົາທັງປວງດັ່ງນີ້ວ່າ "ບັນດາພະ
ຜູ້ທີ່ບໍ່ໄດ້ຊົງສ້າງຟ້າສະຫວັນ ແລະແຜ່ນດິນໂລກ ຈະພິນາດໄປຈາກແຜ່ນດິນໂລກ ແລະຈາກ
ພາຍໃຕ້ຟ້າສະຫວັນເຫລົ່ານີ້" [12]ພຣະອົງຊົງສ້າງໂລກດ້ວຍລິດເດດຂອງພຣະອົງ ພຣະອົງຊົງ
ສະຖາປະນາໂລກໄວ້ດ້ວຍພຣະສະຕິປັນຍາຂອງພຣະອົງ ແລະຊົງຂຶງຟ້າສະຫວັນອອກດ້ວຍ
ຄວາມເຂົ້າໃຈຂອງພຣະອົງ [13]ເມື່ອພຣະອົງຊົງເປັ່ງພຣະສຸລະສຽງ ກໍມີສຽງນໍ້າຄະນອງໃນທ້ອງ-
ຟ້າ ແລະຊົງເຮັດໃຫ້ໝອກຟູຂຶ້ນຈາກປາຍໂລກ ຊົງເຮັດຟ້າແລບເພື່ອຝົນ ແລະຊົງນຳລົມມາ
ຈາກພຣະຄັງຂອງພຣະອົງ [14]ມະນຸດທຸກຄົນໂຫດຮ້າຍໃນທາງຄວາມຮູ້ຂອງຕົນ ຊ່າງທອງທຸກ
ຄົນຈະໄດ້ອັບອາຍ ເພາະຮູບເຄົາລົບຂອງຕົນ ເພາະຮູບເຄົາລົບທີ່ເປັນໂລຫະຫລໍ່ຂອງຕົນເປັນ
ຂອງບໍ່ຈິງ ແລະບໍ່ມີລົມຫາຍໃຈໃນຮູບເຄົາລົບນັ້ນ [15]ມັນເປັນຂອງບໍ່ມີຄ່າ ແລະເປັນຜົນງານ
ແຫ່ງຄວາມຜິດພາດ ມັນຈະຕ້ອງພິນາດເມື່ອເຖິງເວລາການລົງໂທດ [16]ພຣະອົງຜູ້ຊົງເປັນສ່ວນ
ຂອງຢາໂຄບບໍ່ເໝືອນສິ່ງເຫລົ່ານີ້ ເພາະພຣະອົງຊົງເປັນຜູ້ທີ່ກໍ່ຮ່າງທຸກສິ່ງຂຶ້ນ ແລະອິສຣາເອນ
ເປັນຕະກູນທີ່ເປັນມໍລະດົກຂອງພຣະອົງ **ພຣະຜູ້ເປັນເຈົ້າ**ຈອມໂຍທາເປັນພຣະນາມຂອງພຣະ-
ອົງ [17]ເຈົ້າທັງຫລາຍທີ່ອາໄສຢູ່ພາຍໃຕ້ການຖືກປິດລ້ອມເອີຍ ຈົ່ງເກັບເຄື່ອງຂອງຈາກພື້ນດິນ
[18]ເພາະ**ພຣະຜູ້ເປັນເຈົ້າ**ກ່າວດັ່ງນີ້ວ່າ "ເບິ່ງແມ ເຮົາຈະໂຍນຊາວແຜ່ນດິນອອກໄປເສຍໃນເວ-
ລານີ້ ແລະເຮົາຈະນຳຄວາມທຸກໃຈມາເຖິງພວກເຂົາເພື່ອໃຫ້ພວກເຂົາຮູ້ສຶກ" [19]ວິບັດແກ່ຂ້າພະ-
ເຈົ້າ ເພາະຄວາມເຈັບປວດຂອງຂ້າພະເຈົ້າ ບາດແຜຂອງຂ້າພະເຈົ້າກໍຮ້າຍແຮງ ແຕ່ຂ້າພະເຈົ້າ
ວ່າ "ແທ້ຈິງ ນີ້ເປັນຄວາມທຸກໃຈ ແລະຂ້າພະເຈົ້າຈະຕ້ອງທົນເອົາ" [20]ເຕັນຂອງຂ້າພະເຈົ້າກໍຖືກ
ທຳລາຍ ແລະເຊືອກຂອງຂ້າພະເຈົ້າກໍຂາດ ລູກໆຂອງຂ້າພະເຈົ້າຈາກຂ້າພະເຈົ້າໄປໝົດ ແລະ
ບໍ່ມີພວກເຂົາອີກແລ້ວ ບໍ່ມີຜູ້ໜຶ່ງຜູ້ໃດທີ່ຈະກາງເຕັນໃຫ້ຂ້າພະເຈົ້າອີກ ແລະແຂວນຜ້າກັ້ງຂອງ
ຂ້າພະເຈົ້າໃຫ້ [21]ເພາະວ່າຜູ້ລ້ຽງແກະກໍໂງ່ຈ້າ ແລະບໍ່ໄດ້ຊອກຫາ**ພຣະຜູ້ເປັນເຈົ້າ** ເພາະສະນັ້ນ

ພວກເຂົາຈະບໍ່ໄດ້ຈະເລີນຂຶ້ນ ແລະຝູງແກະທັງຫລາຍຂອງພວກເຂົາກໍຈະກະຈັດກະຈາຍໄປ
[22]ເບິ່ງແມ ສຽງຊ່າລືມາເຖິງແລ້ວ ສຽງແຫ່ງຄວາມສັບສົນວຸ້ນວາຍຈາກແດນເໜືອ ທັງຫລາຍຈະ
ເຮັດໃຫ້ຫົວເມືອງຢູດາເປັນບ່ອນຮ້າງເປົ່າ ໃຫ້ເປັນບ່ອນຢູ່ຂອງໝາປ່າ [23]ຂ້າແດ່ພຣະຜູ້ເປັນເຈົ້າ
ຂ້າພະອົງຮູ້ແລ້ວວ່າ ທາງຂອງມະນຸດບໍ່ຢູ່ທີ່ຕົວເຂົາ ຄືບໍ່ຢູ່ທີ່ມະນຸດຜູ້ຊຶ່ງດຳເນີນໄປຕາມບາດ-
ຍ່າງຂອງຕົນເອງ [24]ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງໂຜດຕີສອນຂ້າພະອົງດ້ວຍຄວາມຍຸດຕິທຳ ບໍ່
ແມ່ນດ້ວຍຄວາມໂກດຮ້າຍຂອງພຣະອົງ ຢ້ານວ່າພຣະອົງຈະຊົງນຳຂ້າພະອົງມາເຖິງຄວາມສູນ
ເສຍ [25]ຂໍພຣະອົງຊົງຖອກພຣະພິໂລດຂອງພຣະອົງເໜືອເຫລົ່າປະຊາຊາດທີ່ບໍ່ຮູ້ຈັກພຣະອົງ
ແລະເໜືອບັນດາຄອບຄົວຜູ້ບໍ່ອອກພຣະນາມຂອງພຣະອົງ ເພາະພວກເຂົາທັງຫລາຍໄດ້ເຜົາ
ຜານຢາໂຄບ ພວກເຂົາໄດ້ກືນເພິ່ນເສຍ ແລະເຜົາຜານເພິ່ນ ແລະເຮັດໃຫ້ບ່ອນຢູ່ອາໄສຂອງ
ເພິ່ນຖືກຖິ້ມຮ້າງ

# ບົດທີ 11

## ເຢເຣມີຢາກັບຄຳໝັ້ນສັນຍາ

[1]ພຣະທຳຊຶ່ງມາຈາກພຣະຜູ້ເປັນເຈົ້າເຖິງເຢເຣມີຢາວ່າ [2]ພຣະຜູ້ເປັນເຈົ້າຊົງກ່າວຕໍ່ເຢເຣມີ-
ຢາວ່າ, “ເຈົ້າຈົ່ງຟັງເນື້ອແທ້ແຫ່ງຄຳໝັ້ນສັນຍານີ້ ແລ້ວໃຫ້ບອກຊາວຢູດາ ແລະນະຄອນເຢຣູ-
ຊາເລັມວ່າ, [3]ເຮົາພຣະຜູ້ເປັນເຈົ້າຂອງຊາວອິສຣາເອນ ໄດ້ສາບແຊ່ງທຸກໆ ຄົນທີ່ບໍ່ປະຕິບັດ
ຕາມຄຳໝັ້ນສັນຍານີ້. [4]ມັນເປັນຄຳໝັ້ນສັນຍາທີ່ເຮົາໄດ້ໃຫ້ແກ່ບັນພະບູລຸດຂອງພວກເຂົາ ເມື່ອ
ຄາວເຮົາພາພວກເຂົາອອກມາຈາກເອຢິບ ຄືປະເທດທີ່ເປັນເໝືອນເຕົາຫລອມເຫລັກສຳລັບພວກ
ເຂົານັ້ນ ເຮົາໄດ້ບອກໃຫ້ພວກເຂົາເຊື່ອຟັງຄຳຂອງເຮົາ ແລະໃຫ້ເຮັດທຸກຢ່າງທີ່ເຮົາໄດ້ສັ່ງໄວ້
ເຮົາໄດ້ບອກພວກເຂົາວ່າ ຖ້າພວກເຂົາເຊື່ອຟັງ ພວກເຂົາຈະໄດ້ເປັນໄພ່ພົນຂອງເຮົາ ເຮົາຈະ
ເປັນພຣະເຈົ້າຂອງພວກເຂົາ. [5]ແລ້ວເຮົາຈະຮັກສາຄຳໝັ້ນສັນຍາທີ່ວ່າ ຈະຍົກປະເທດອັນຮັ່ງມີ
ແລະອຸດົມສົມບູນໃຫ້ແກ່ບັນພະບູລຸດຂອງພວກເຂົາດັ່ງທີ່ພວກເຂົາໄດ້ມີແລ້ວໃນທຸກມື້ນີ້.” ແລ້ວ
ເຢເຣມີຢາໄດ້ທູນຕອບວ່າ, “ໂດຍ ຂ້ານ້ອຍຈະເວົ້າດັ່ງນັ້ນ.”

[6]ຂະນະນັ້ນ ພຣະຜູ້ເປັນເຈົ້າຈຶ່ງຊົງບອກເຢເຣມີຢາວ່າ, “ຈົ່ງໄປຍັງຫົວເມືອງຕ່າງໆ ຂອງ
ຊາວຢູດາ ແລະໄປຕາມຖະໜົນຫົນທາງໃນນະຄອນເຢຣູຊາເລັມ ແລ້ວປ່າວປະກາດຖ້ອຍຄຳ
ຂອງເຮົາຢູ່ທີ່ນັ້ນ ໃຫ້ບອກປະຊາຊົນຟັງເນື້ອແທ້ແຫ່ງຄຳໝັ້ນສັນຍານີ້ ແລະໃຫ້ພວກເຂົາປະພຶດ
ຕາມ. [7]ເມື່ອເຮົາພາບັນພະບູລຸດຂອງພວກເຂົາອອກຈາກເອຢິບ ເຮົາໄດ້ເຕືອນພວກເຂົາຢ່າງ
ເດັດຂາດໃຫ້ເຊື່ອຟັງຄຳຂອງເຮົາ ແລະໄດ້ເຕືອນພວກເຂົາຕໍ່ມາຈົນເຖິງທຸກມື້ນີ້ ແຕ່ພວກເຂົາບໍ່
ໄດ້ເຊື່ອຟັງ ແລະເຮັດຕາມເລີຍ. [8]ພວກເຂົາທຸກຄົນຍັງພາກັນດື້ດ້ານ ແລະເຮັດຊົ່ວຕໍ່ໄປເໝືອນ
ເດີມ ເຮົາໄດ້ສັ່ງພວກເຂົາໃຫ້ເຊື່ອຟັງຄຳໝັ້ນສັນຍາ ແຕ່ພວກເຂົາໄດ້ປະຕິເສດ ດັ່ງນັ້ນ ເຮົາຈຶ່ງ
ນຳໂທດທັງປວງທີ່ກ່າວຢູ່ໃນທີ່ນັ້ນມາຖືກພວກເຂົາ.”

[9]ຕໍ່ມາ ພຣະຜູ້ເປັນເຈົ້າຊົງກ່າວຕໍ່ເຢເຣມີຢາວ່າ, “ປະຊາຊົນຢູດາ ແລະຊາວນະຄອນເຢຣູ-
ຊາເລັມກຳລັງຄິດກະບົດຕໍ່ສູ້ເຮົາ. [10]ພວກເຂົາກັບຄືນໄປເຮັດບາບ ແລະບໍ່ຍອມເຮັດຕາມສິ່ງທີ່

ເຮົາບອກເໝືອນບັນພະບູລຸດຂອງພວກເຂົາ ພວກເຂົາໄດ້ຂາບໄຫວ້ພະອື່ນ ຊາວອິສຣາເອນ
ແລະຊາວຢູດາ ໄດ້ເຮັດຜິດຄຳໝັ້ນສັນຍາທີ່ເຮົາໄດ້ໃຫ້ກັບບັນພະບູລຸດຂອງພວກເຂົາ. [11]ດັ່ງນັ້ນ
ແຫລະ ເຮົາພຣະຜູ້ເປັນເຈົ້າຈຶ່ງເຕືອນວ່າຈະນຳໄພພິບັດມາສູ່ພວກເຂົາ ພວກເຂົາຈະຫລົບຫລີກ
ບໍ່ໄດ້ ແລະເມື່ອຮ້ອງຂໍໃຫ້ເຮົາຊ່ອຍເຫລືອ ເຮົາຈະບໍ່ຟັງສຽງຂອງພວກເຂົາ. [12]ເມື່ອນັ້ນປະຊາຊົນ
ຢູດາ ແລະຊາວນະຄອນ ເຢຣູຊາເລັມ ຈະໄປຮ້ອງໄຫ້ຂໍຄວາມຊ່ອຍເຫລືອຈາກພະທີ່ພວກເຂົາ
ຖວາຍບູຊາ ແຕ່ວ່າເມື່ອໄພພິບັດມາເຖິງ ພະເຫລົ່ານີ້ຈະຊ່ອຍພວກເຂົາໃຫ້ລອດພົ້ນບໍ່ໄດ້. [13]ປະ-
ຊາຊົນຢູດາມີພະເຊື່ອຖືຫລາຍເທົ່າກັນກັບມີເມືອງ ແລະຊາວນະຄອນເຢຣູຊາເລັມກໍຕັ້ງແທ່ນ
ສຳລັບຖວາຍບູຊາພະບາອານ ຫລາຍເທົ່າກັນກັບຖະໜົນຫົນທາງໃນນະຄອນເຢຣູຊາເລັມ.
[14]ເຢເຣມີຢາເອີຍ ເຈົ້າຢ່າອ້ອນວອນ ຫລືທູນຂໍຕໍ່ເຮົາເພື່ອປະຊາຊົນເຫລົ່ານີ້ ເມື່ອພວກເຂົາຕົກ-
ທຸກໄດ້ຍາກ ແລະຮ້ອງໃຫ້ເຮົາຊ່ອຍ ເຮົາຈະບໍ່ຟັງສຽງຂອງພວກເຂົາ.”

[15]ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ປະຊາຊົນຜູ້ທີ່ເຮົາຮັກກຳລັງເຮັດຊົ່ວ ພວກເຂົາມີສິດຫຍັງ
ຈຶ່ງມາຢູ່ໃນວິຫານຂອງເຮົາ ພວກເຂົາຄິດວ່າຈະໜີພົ້ນຈາກຄວາມຫລົ້ມຈົມໄດ້ດ້ວຍການບະບົນ
ຂອງພວກເຂົາ ແລະດ້ວຍການເຜົາສັດບູຊາຢ່າງນັ້ນບໍ? ພວກເຂົາຄິດຈະໜີໃຫ້ພົ້ນດ້ວຍວິທີຢ່າງ
ນີ້ບໍ? [16]ຄັ້ງໜຶ່ງເຮົາໄດ້ເອີ້ນພວກເຂົາວ່າ ຕົ້ນກອກໃບຂຽວສົດ ແລະມີໝາກງາມ ແຕ່ບັດນີ້ເຮົາ
ຈະມາຢ່າງສະໜັ່ນຫວັ່ນໄຫວເໝືອນສຽງຟ້າຮ້ອງ ເພື່ອຈູດໃບ ແລະຫັກງ່າມັນຖິ້ມ. [17]ເຮົາພຣະ-
ຜູ້ເປັນເຈົ້າອົງຍິ່ງໃຫຍ່ ຜູ້ໄດ້ປູກຝັງຊາວອິສຣາເອນ ແລະຊາວຢູດາ ແຕ່ບັດນີ້ ເຮົາຈະນາບຄູ່
ພວກເຂົາດ້ວຍໄພພິບັດອັນຮ້າຍແຮງ ມັນແມ່ນເຂົາເອງນຳໄພພິບັດມາໃສ່ຕົນເອງ ເພາະວ່າພວກ
ເຂົາໄດ້ເຮັດຜິດ ເຮົາໄດ້ຮ້າຍພວກເຂົາ ດ້ວຍວ່າພວກເຂົາໄດ້ຖວາຍບູຊາແກ່ພະບາອານ.”
[18]ພຣະຜູ້ເປັນເຈົ້າຊົງສະແດງແກ່ຂ້າພະເຈົ້າ ແລະຂ້າພະເຈົ້າກໍຮູ້ແລ້ວ ພຣະອົງຊົງສະແດງການ
ກະທຳຂອງເຂົາແກ່ຂ້າພະເຈົ້າ [19]ແຕ່ຂ້າພະອົງເປັນເໝືອນລູກແກະ ຫລືງົວຊຶ່ງຖືກພາມາເຖິງ
ບ່ອນຂ້າ ຂ້າພະອົງບໍ່ຮູ້ເລີຍວ່າ ຂ້າພະອົງເອງໄດ້ຖືກເຂົາວາງແຜນການຕໍ່ສູ້ໂດຍກ່າວວ່າ “ໃຫ້
ເຮົາທຳລາຍຕົ້ນໄມ້ກັບຜົນຂອງມັນເສຍ ໃຫ້ເຮົາຕັດລາວອອກເສຍຈາກແຜ່ນດິນຂອງຄົນເປັນ
ເພື່ອຊື່ຂອງລາວຈະບໍ່ເປັນທີ່ລະນຶກເຖິງອີກເລີຍ” [20]ແຕ່ວ່າ ຂ້າແດ່ພຣະຜູ້ເປັນເຈົ້າຈອມໂຍທາ
ຜູ້ຊົງພິພາກສາຢ່າງຊອບທຳ ຜູ້ຊົງທົດລອງເບິ່ງທັງໃຈ ແລະຈິດ ຂໍໃຫ້ຂ້າພະອົງແນມເຫັນການ
ແກ້ແຄ້ນຂອງພຣະອົງຕົກແກ່ພວກເຂົາ ເພາະຂ້າພະອົງໄດ້ມອບເລື່ອງຂອງຂ້າພະອົງໄວ້ກັບ
ພຣະອົງແລ້ວ

[21]ເພາະສະນັ້ນ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ກ່ຽວກັບຄົນຕາແສງອານາໂທດ ຜູ້ສະແຫວງຫາ
ຊີວິດຂອງເຈົ້າ ແລະກ່າວວ່າ “ຢ່າປະກາດພຣະທຳໃນພຣະນາມຂອງພຣະຜູ້ເປັນເຈົ້າ ຫລືບໍ່
ດັ່ງນັ້ນເຈົ້າຈະຕ້ອງຕາຍດ້ວຍມືຂອງເຮົາ” [22]ເພາະສະນັ້ນ ພຣະຜູ້ເປັນເຈົ້າຈອມໂຍທາກ່າວວ່າ
“ເບິ່ງແມ ເຮົາຈະລົງໂທດພວກເຂົາທັງປວງ ພວກຄົນໜຸ່ມຈະຕາຍດ້ວຍດາບ ບັນດາລູກຊາຍ
ແລະບຸດສາວຂອງເຂົາຈະຕາຍດ້ວຍການອຶດຫິວອາຫານ [23]ຈະບໍ່ມີເຫລືອຈັກຄົນດຽວ ເພາະເຮົາ
ຈະນຳຄວາມຮ້າຍມາສູ່ຄົນຕາແສງອານາໂທດ ຄືປີແຫ່ງການລົງໂທດພວກເຂົາ”

# ບົດທີ 12

## ເລື່ອງຮ້ອງທຸກຂອງເຢເຣມີຢາ ແລະຄຳຕອບຈາກພຣະເຈົ້າ

1ຂ້າແດ່ພຣະຜູ້ເປັນເຈົ້າ ເມື່ອຂ້າພະອົງສູ້ຄະດີກັບພຣະອົງ ພຣະອົງກໍຊົງເປັນຝ່າຍຖືກ ເຖິງ
ປານນັ້ນ ຂ້າພະອົງຍັງຂໍທູນສະເໜີ ຄະດີຂອງຂ້າພະອົງຕໍ່ພຣະອົງ ເຫດໃດທາງຂອງຄົນຊົ່ວຈຶ່ງ
ຈະເລີນຂຶ້ນ ເຫດໃດທຸກຄົນທີ່ທໍລະຍົດກໍຢູ່ເຢັນເປັນສຸກ 2ພຣະອົງຊົງປູກພວກເຂົາທັງຫລາຍ
ແລະພວກເຂົາກໍຢັ່ງຮາກລົງ ພວກເຂົາງອກງາມຂຶ້ນ ແລະບັງເກີດຜົນ ພຣະອົງຊົງຢູ່ໃກ້ປາກ
ຂອງພວກເຂົາ ແຕ່ໄກຈາກໃຈຂອງເຂົາ 3ຂ້າແດ່ພຣະຜູ້ເປັນເຈົ້າ ແດ່ພຣະອົງຊົງຮູ້ຈັກຂ້າພະ-
ອົງ ພຣະອົງຊົງເຫັນຂ້າພະອົງ ແລະຊົງທົດລອງໃຈຂອງຂ້າພະອົງທີ່ມີຕໍ່ພຣະອົງ ຂໍຊົງຍົກພວກ
ເຂົາອອກມາເໝືອນແກະສຳລັບການຂ້າ ແລະຕັ້ງພວກເຂົາໄວ້ຕ່າງຫາກເພື່ອມື້ຂ້າ 4ແຜ່ນດິນນີ້
ຈະໄວ້ທຸກດົນເທົ່າໃດ ແລະຜັກຫຍ້າຕາມທົ່ງນາທຸກແຫ່ງຈະຫ່ຽວແຫ້ງໄປດົນເທົ່າໃດ ເພາະ
ຄວາມຊົ່ວຂອງຜູ້ທີ່ອາໄສຢູ່ໃນນັ້ນ ສັດ ແລະນົກກໍຖືກຜານໄປເສຍ ເພາະພວກເຂົາວ່າ “ພຣະ-
ອົງຈະບໍ່ທອດພຣະເນດປັ້ນສຸດປາຍຂອງເຮົາທັງຫລາຍ”

5“ຖ້າເຈົ້າແລ່ນແຂ່ງກັບທະຫານ ແລະພວກເຂົາເຮັດໃຫ້ເຈົ້າອິດເມື່ອຍ ເຈົ້າຈະແຂ່ງກັບມ້າໄດ້
ຢ່າງໃດ ແລະຖ້າເຈົ້າຍັງອິດເມື່ອຍໃນແຜ່ນດິນແຫ່ງສັນຕິສຸກ ຊຶ່ງເຈົ້າວາງໃຈນັ້ນ ເຈົ້າຈະເຮັດ
ຢ່າງໃດໃນດົງລຸ່ມແມ່ນ້ຳຢໍແດນ 6ເພາະວ່າແມ່ນພີ່ນ້ອງຂອງເຈົ້າ ແລະເຊື້ອສາຍຂອງພໍ່ເຈົ້າ
ເຖິງວ່າພວກເຂົາໄດ້ເຮັດການທໍລະຍົດຕໍ່ເຈົ້າ ພວກເຂົາຍັງເອີ້ນໃຫ້ກຸ່ມໃຫຍ່ໄລ່ຕາມເຈົ້າໄປ ເຖິງ
ແມ່ນວ່າພວກເຂົາເວົ້າຖ້ອຍຄຳຢ່າງດີແກ່ເຈົ້າ ຢ່າເຊື່ອພວກເຂົາເລີຍ 7ເຮົາໄດ້ປະຖິ້ມພຣະນິເວດ
ຂອງເຮົາ ພວກເຂົາໄດ້ໂຍນມໍລະດົກຂອງເຮົາຖິ້ມ ເຮົາໄດ້ມອບຜູ້ທີ່ຮັກຂອງຈິດໃຈເຮົາໄວ້ໃນມື
ສັດຕູຂອງນາງ 8ມໍລະດົກຂອງເຮົາໄດ້ກາຍເປັນເໝືອນໂຕສິງໃນປ່າຕໍ່ເຮົາ ພວກເຂົາເປັ່ງສຽງ
ເຂົ້າໃສ່ເຮົາ ເພາະສະນັ້ນ ເຮົາຈຶ່ງກຽດຊັງພວກເຂົາ 9ມໍລະດົກຂອງເຮົາເປັນແກ່ເຮົາເໝືອນຢ່າງ
ນົກກາຍດ່າງ ຝູງນົກຊຶ່ງຢູ່ຮອບຕໍ່ສູ້ນົກນັ້ນ ໄປສາ ໄປຊຸມນຸມສັດປ່າທັງໝົດທຸກຢ່າງ ແລ້ວພາ
ມັນໃຫ້ມາກິນເສຍ 10ຜູ້ລ້ຽງແກະເປັນຈຳນວນຫລາຍໄດ້ທຳລາຍສວນອະງຸ່ນຂອງເຮົາເສຍ ພວກ
ເຂົາໄດ້ຢຽບຢ່ຳສວນຂອງເຮົາລົງ ພວກເຂົາໄດ້ເຮັດສວນອັນພໍໃຈຂອງເຮົາກາຍເປັນຖິ່ນແຫ້ງ-
ແລ້ງກັນດານທີ່ຮົກຮ້າງ 11ພວກເຂົາໄດ້ເຮັດສວນຂອງເຮົາໃຫ້ຮົກຮ້າງ ເມື່ອຮົກຮ້າງ ສວນນັ້ນກໍ
ໄວ້ທຸກຕໍ່ເຮົາ ແຜ່ນດິນທັງໝົດກໍຖືກຖິ້ມໃຫ້ຮົກຮ້າງ ເພາະບໍ່ມີຜູ້ໃດເອົາໃຈໃສ່ເລື່ອງນັ້ນ 12ຜູ້ທຳ-
ລາຍລ້າງໄດ້ມາຈາກບັນດາບ່ອນສູງທັງປວງໃນຖິ່ນແຫ້ງແລ້ງກັນດານ ເພາະວ່າແສງດາບຂອງ
ພຣະຜູ້ເປັນເຈົ້າຈະທຳລາຍຈາກປາຍແຜ່ນດິນນີ້ໄປເຖິງປາຍອີກຂ້າງໜຶ່ງ ບໍ່ມີເນື້ອໜັງໃດໆທີ່ຈະ
ມີສານຕິສຸກ 13ພວກເຂົາໄດ້ຫວ່ານເຂົ້າວີດ ແຕ່ຈະກ່ຽວໜາມ ພວກເຂົາໄດ້ເຮັດໃຫ້ຕົວເຈັບ ແຕ່
ຈະບໍ່ໄດ້ກຳໄລຫຍັງ ພວກເຂົາຈະອັບອາຍດ້ວຍຜົນເກັບກ່ຽວຂອງຕົນ ດ້ວຍເຫດຄວາມຮ້າຍອັນ
ຮ້ອນຮົນຂອງພຣະຜູ້ເປັນເຈົ້າ”

14ພຣະຜູ້ເປັນເຈົ້າກ່າວດັ່ງນີ້ ດ້ວຍເລື່ອງບັນດາເພື່ອນບ້ານທີ່ຊົ່ວຮ້າຍຂອງເຮົາ ຜູ້ທີ່ໄດ້ແຕະ-
ຕ້ອງມໍລະດົກຊຶ່ງເຮົາໄດ້ໃຫ້ອິສຣາເອນ ປະຊາຊົນຂອງເຮົາສືບມໍລະດົກນັ້ນວ່າ “ເບິ່ງແມ ເຮົາ
ຈະຖອນພວກເຂົາຂຶ້ນຈາກແຜ່ນດິນຂອງເຂົາ ແລະເຮົາຈະຖອນເຊື້ອສາຍຢູດາຈາກທ່າມກາງ

ພວກເຂົາທັງຫລາຍ [15]ແລະຕໍ່ມາຫລັງຈາກທີ່ເຮົາໄດ້ຖອນພວກເຂົາຂຶ້ນແລ້ວ ເຮົາຈະມີຄວາມ
ເມດຕາຕໍ່ພວກເຂົາອີກ ແລະເຮົາຈະນຳພວກເຂົາມາອີກ ຕ່າງກໍມາຍັງມໍລະດົກຂອງຕົນ ແລະ
ແຜ່ນດິນຂອງຕົນ [16]ແລະຈະເກີດການນີ້ຂຶ້ນວ່າ ຖ້າພວກເຂົາທັງຫລາຍຈະອຸດສາຫະສຶກສາທາງ
ແຫ່ງປະຊາຊົນຂອງເຮົາ ຄືປະຕິຍານໃນນາມຂອງເຮົາວ່າ 'ຕາບໃດທີ່ພຣະຜູ້ເປັນເຈົ້າຊົງພຣະ-
ຊົນຢູ່ແນ່ນອນ' ເໝືອນທີ່ພວກເຂົາໄດ້ສອນປະຊາຊົນຂອງເຮົາໃຫ້ປະຕິຍານໂດຍພະບາອານ
ແລ້ວພວກເຂົາຈະໄດ້ຮັບການສ້າງຂຶ້ນໄວ້ທ່າມກາງປະຊາຊົນຂອງເຮົາ [17]ແຕ່ຖ້າພວກເຂົາຈະບໍ່
ເຊື່ອຟັງ ແລ້ວເຮົາຈະຖອນປະຊາຊາດນັ້ນຂຶ້ນ ແລະທຳລາຍຈົນໝົດສິ້ນ" ພຣະຜູ້ເປັນເຈົ້າກ່າວ
ດັ່ງນີ້ແຫລະ

# ບົດທີ 13

## ຜ້າປ່ານຄາດແອວທີ່ເປີເປື້ອນປຽບເໝືອນກັບອິສຣາເອນ

[1]ພຣະຜູ້ເປັນເຈົ້າກ່າວແກ່ຂ້າພະເຈົ້າດ້ວຍວ່າ "ຈົ່ງໄປຊື້ຜ້າປ່ານຄາດແອວມາຜືນໜຶ່ງ ຄາດ
ແອວຂອງເຈົ້າໄວ້ ແລະຢ່າຈຸ່ມນ້ຳ" [2]ຂ້າພະເຈົ້າຈຶ່ງຊື້ຜ້າຄາດແອວຜືນໜຶ່ງຕາມພຣະທຳຂອງ
ພຣະຜູ້ເປັນເຈົ້າ ແລະຄາດແອວຂອງຂ້າພະເຈົ້າໄວ້ [3]ແລະພຣະທຳຂອງພຣະຜູ້ເປັນເຈົ້າມາເຖິງ
ຂ້າພະເຈົ້າເທື່ອທີສອງວ່າ [4]"ຈົ່ງເອົາຜ້າຄາດແອວຊຶ່ງເຈົ້າໄດ້ຊື້ມາ ຊຶ່ງຢູ່ທີ່ແອວຂອງເຈົ້າ ແລະ
ຈົ່ງລຸກຂຶ້ນໄປຍັງແມ່ນ້ຳເອຟຣາດ ແລ້ວເຊື່ອງຜ້ານັ້ນໄວ້ໃນຫລືບຫີນແຫ່ງໜຶ່ງ" [5]ຂ້າພະເຈົ້າກໍໄປ
ແລະເຊື່ອງຜ້ານັ້ນໄວ້ຂ້າງແມ່ນ້ຳເອຟຣາດ ດັ່ງທີ່ພຣະຜູ້ເປັນເຈົ້າຊົງບັນຊາຂ້າພະເຈົ້າ [6]ຕໍ່ມາ
ອີກຫລາຍມື້ ພຣະຜູ້ເປັນເຈົ້າຊົງກ່າວກັບຂ້າພະເຈົ້າວ່າ "ຈົ່ງລຸກຂຶ້ນໄປຍັງແມ່ນ້ຳເອຟຣາດ
ແລະເອົາຜ້າຄາດແອວ ຊຶ່ງເຮົາໄດ້ສັ່ງເຈົ້າໃຫ້ເຊື່ອງໄວ້ບ່ອນນັ້ນ ມາເສຍ" [7]ແລ້ວຂ້າພະເຈົ້າກໍໄປ
ທີ່ແມ່ນ້ຳເອຟຣາດ ແລະຂຸດເອົາຜ້າຄາດແອວມາຈາກບ່ອນທີ່ຂ້າພະເຈົ້າໄດ້ເຊື່ອງໄວ້ ເບິ່ງແມ
ຜ້າຄາດແອວນັ້ນເສຍຫາຍໝົດ ຈະໃຊ້ການໃດກໍບໍ່ໄດ້

[8]ແລ້ວພຣະທຳຂອງພຣະຜູ້ເປັນເຈົ້າກໍມາຍັງຂ້າພະເຈົ້າວ່າ [9]"ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ
ເຮົາກໍຈະທຳລາຍຄວາມອວດອົ່ງຂອງຢູດາ ແລະຄວາມອວດອົ່ງຂອງເຢຣູຊາເລັມເສຍເຊັ່ນນັ້ນ
ແຫລະ [10]ຄືຊົນຊາດທີ່ຊົ່ວຮ້າຍນີ້ ຜູ້ປະຕິເສດບໍ່ຟັງຖ້ອຍຄຳຂອງເຮົາ ຜູ້ທີ່ດຳເນີນຕາມຄວາມດື້
ດ້ານແຫ່ງຈິດໃຈຂອງຕົນເອງ ແລະໄດ້ຕິດສອຍຫ້ອຍຕາມພະອື່ນ ເພື່ອຈະບົວລະບັດ ແລະນະ-
ມັດສະການພະເຫລົ່ານັ້ນ ຈະເປັນເໝືອນຜ້າຄາດແອວນີ້ ຊຶ່ງຈະໃຊ້ການໃດກໍບໍ່ໄດ້ [11]ເພາະຜ້າ
ຄາດແອວຕິດຢູ່ທີ່ແອວຂອງມະນຸດສັນໃດ ເຮົາກໍໄດ້ເຮັດໃຫ້ເຊື້ອສາຍທັງໝົດຂອງອິສຣາເອນ
ແລະເຊື້ອສາຍທັງໝົດຂອງຢູດາຕິດຢູ່ກັບເຮົາສັນນັ້ນ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ ເພື່ອພວກເຂົາ
ທັງຫລາຍຈະເປັນປະຊາຊົນ ຊື່ສຽງ ທີ່ສັນລະເສີນ ແລະສະຫງ່າລາສີແກ່ເຮົາ ແຕ່ພວກເຂົາກໍບໍ່
ຟັງ

## ການທີ່ອິສຣາເອນຈະເປັນຊະເລີຍກໍໃກ້ເຂົ້າມາແລ້ວ

[12]ສະນັ້ນ ເຈົ້າຈົ່ງກ່າວຖ້ອຍຄຳນີ້ແກ່ພວກເຂົາ ພຣະຜູ້ເປັນເຈົ້າພຣະເຈົ້າແຫ່ງອິສຣາເອນ
ກ່າວດັ່ງນີ້ວ່າ 'ນ້ຳອະງຸ່ນຈະເຕັມໄຫທຸກໜ່ວຍ' ແລະພວກເຂົາທັງຫລາຍຈະເວົ້າກັບເຈົ້າວ່າ 'ເຮົາ

ບໍ່ຮູ້ບໍວ່າ ນ້ຳອະງຸ່ນຈະຕ້ອງເຕັມໄຫທຸກໜ່ວຍ’ [13]ແລ້ວເຈົ້າຈົ່ງເວົ້າກັບພວກເຂົາວ່າ ພຣະຜູ້ເປັນ-
ເຈົ້າກ່າວດັ່ງນີ້ວ່າ ເບິ່ງແມ ເຮົາຈະໃຫ້ຊາວແຜ່ນດິນນີ້ທັງໝົດເຕັມໄປດ້ວຍຄວາມມືນເມົາ ຄືກະ-
ສັດທັງຫລາຍຜູ້ປະທັບເທິງບັນລັງຂອງດາວິດ ພວກປະໂລຫິດ ພວກຜູ້ປະກາດພຣະທຳ ແລະ
ຊາວກຸງເຢຣູຊາເລັມທັງໝົດ [14]ແລະພຣະຜູ້ເປັນເຈົ້າກ່າວວ່າ ເຮົາຈະໂຍນພວກເຂົາໃຫ້ຕຳກັນ
ແລະກັນ ພວກພໍ່ກໍຕຳພວກລູກ ເຮົາຈະບໍ່ສົງສານ ຫລືບໍ່ໄວ້ຊີວິດ ຫລືບໍ່ເມດຕາ ແຕ່ເຮົາຈະທຳ-
ລາຍພວກເຂົາ”

[15]ຈົ່ງຟັງ ແລະຫງ່ຽງຫູຟັງ ຢ່າອວດດີໄປເລີຍ ເພາະພຣະຜູ້ເປັນເຈົ້າຊົງໃຫ້ພຣະຄຳເວົ້າແລ້ວ
[16]ຈົ່ງຖວາຍສະຫງ່າລາສີແກ່ພຣະຜູ້ເປັນເຈົ້າ ພຣະເຈົ້າຂອງເຈົ້າທັງຫລາຍ ກ່ອນທີ່ພຣະອົງຈະ
ຊົງນຳຄວາມມືດມາ ກ່ອນທີ່ຕີນຂອງເຈົ້າຈະສະດຸດເທິງພູເຂົາທີ່ມືດມິດ ແລະຂະນະເມື່ອເຈົ້າ
ທັງຫລາຍຊອກຫາຄວາມສະຫວ່າງ ພຣະອົງຊົງກັບໃຫ້ເປັນເງົາມັດຈຸລາດ ແລະຊົງເຮັດໃຫ້ເປັນ-
ຄວາມມືດທຶບ [17]ແຕ່ຖ້າເຈົ້າທັງຫລາຍຈະບໍ່ຟັງ ຈິດໃຈຂອງຂ້າພະເຈົ້າກໍຈະຮ້ອງໄຫ້ຮ່ຳໄຮ ເພາະ
ຄວາມອວດອົ່ງຂອງເຈົ້າ ຕາຂອງຂ້າພະເຈົ້າຈະຮ້ອງໄຫ້ ແລະມີນ້ຳຕາອາບໜ້າ ເພາະຝູງແກະ
ຂອງພຣະຜູ້ເປັນເຈົ້າຖືກຕ້ອນເອົາໄປເປັນຊະເລີຍ

[18]ຈົ່ງກ່າວແກ່ກະສັດ ແລະພະລາຊີນີວ່າ “ຂໍຊົງປະທັບ ໃນທີ່ຕ່ຳ ເພາະວ່າອຳນາດຂອງພະ
ອົງ ຄືມົງກຸດແຫ່ງສະຫງ່າລາສີຂອງພະອົງຈະຕົກລົງມາ” [19]ຫົວເມືອງແຫ່ງພາກໃຕ້ກໍຖືກປິດ
ຊຶ່ງບໍ່ມີໃຜຈະເປີດໄດ້ ຢູດາທັງໝົດກໍຈະຖືກກວາດໄປເປັນຊະເລີຍ ຈະຖືກກວາດໄປເປັນຊະ-
ເລີຍໝົດ

[20]“ຈົ່ງເງີຍໜ້າຂອງເຈົ້າຂຶ້ນເບິ່ງເຂົາເຈົ້າເຫລົ່ານັ້ນທີ່ມາຈາກທິດເໜືອ ຝູງແກະທີ່ໄດ້ມອບໄວ້
ໃຫ້ແກ່ເຈົ້ານັ້ນຢູ່ທີ່ໃດ ຄືຝູງແກະທີ່ງົດງາມຂອງເຈົ້ານັ້ນ [21]ເຈົ້າຈະວ່າຢ່າງໃດເມື່ອເຂົາຈະລົງ-
ໂທດເຈົ້າ ເພາະເຈົ້າເອງໄດ້ສອນເຂົາໃຫ້ເປັນນາຍ ແລະເປັນປະມຸກຂອງເຈົ້າ ຄວາມເຈັບປວດ
ຈະບໍ່ເຂົ້າມາປົກຄຸມເຈົ້າ ເໝືອນຄວາມເຈັບປວດຂອງຜູ້ຍິງທີ່ກຳລັງເກີດລູກບໍ [22]ແລະຖ້າເຈົ້າເວົ້າ
ໃນໃຈຂອງເຈົ້າວ່າ ‘ເປັນຫຍັງສິ່ງເຫລົ່ານີ້ຈຶ່ງເກີດກັບຂ້າພະເຈົ້າ?’ ກໍເພາະຄວາມຊົ່ວຊ້າທີ່
ຫລວງຫລາຍໃຫຍ່ໂຕຂອງເຈົ້າ ເສື້ອຂອງເຈົ້າຈຶ່ງຕ້ອງຖືກຮື້ຂຶ້ນ ແລະສົ້ນຕີນຂອງເຈົ້າຈຶ່ງບໍ່ປິດ
ບັງ [23]ຄົນເອທີໂອເປຍປ່ຽນວັນນະຂອງຕົນເອງໄດ້ບໍ ຫລືເສືອດາວປ່ຽນລາຍຂອງມັນໄດ້ບໍ? ຖ້າ
ໄດ້ແລ້ວ ເຈົ້າທັງຫລາຍຜູ້ທີ່ເຄີຍເຮັດຄວາມຊົ່ວ ຈະມາເຮັດຄວາມດີກໍໄດ້

[24]ສະນັ້ນ ເຮົາຈະກະຈາຍພວກເຂົາທັງຫລາຍໄປເໝືອນແກບທີ່ຖືກລົມພັດຈາກຖິ່ນແຫ້ງແລ້ງ
ກັນດານ [25]ນີ້ເປັນສ່ວນຂອງເຈົ້າ ເປັນສ່ວນທີ່ເຮົາໄດ້ຕວງອອກໃຫ້ແກ່ເຈົ້າ” ພຣະຜູ້ເປັນເຈົ້າ
ກ່າວດັ່ງນີ້ແຫລະ “ເພາະເຈົ້າໄດ້ລືມເຮົາເສຍ ແລະໄວ້ວາງໃຈໃນການຂີ້ຕົວະ [26]ສະນັ້ນ ເຮົາ
ເອງຈະແກ້ເສື້ອຄຸມຂອງເຈົ້າມາປົກໜ້າເຈົ້າ ຄືໃຫ້ເຫັນຄວາມອັບອາຍຂາຍໜ້າຂອງເຈົ້າ [27]ເຮົາ
ໄດ້ເຫັນການລ່ວງປະເວນີຂອງເຈົ້າ ການຄວນຫາ ການຫລິ້ນຊູ້ແກ່ລາຄະຕັນຫາຂອງເຈົ້າ ແລະ
ການໜ້າກຽດຊັງຂອງເຈົ້າ ເທິງໂນນພູທັງຫລາຍໃນທົ່ງນາ ໂອ ເຢຣູຊາເລັມເອີຍ ວິບັດແກ່ເຈົ້າ
ອີກດົນຈັກເທົ່າໃດເຈົ້າຈຶ່ງຈະຍອມເຮັດໃຫ້ເຈົ້າສະອາດໄດ້”

# ບົດທີ 14

## ຜູ້ປະກາດພຣະທຳປະກາດເລື່ອງຄວາມແຫ້ງແລ້ງ

[1]ພຣະທຳຂອງ ພຣະຜູ້ເປັນເຈົ້າຊຶ່ງມາເຖິງ ເຢເຣມີຢາ ກ່ຽວດ້ວຍຄວາມແຫ້ງແລ້ງວ່າ
[2]"ຢູດາ ໄວ້ທຸກ ແລະປະຕູເມືອງທັງປວງຂອງນາງກໍອ່ອນກຳລັງລົງ ປະຊາຊົນຂອງນາງກໍ
ແຕ່ງເຄື່ອງດຳກົ້ມໜ້າຢູ່ເທິງແຜ່ນດິນ ແລະສຽງຮ້ອງຂອງ ເຢຣູຊາເລັມກໍຂຶ້ນໄປ [3]ຂ້າລາຊະການ
ຂອງນາງສົ່ງລູກນ້ອຍຂອງຕົນໃຫ້ໄປຕັກນໍ້າ ພວກເຂົາໄປຍັງບ່ອນເກັບນໍ້າ ເຫັນວ່າບໍ່ມີນໍ້າ ພວກ
ເຂົາກໍກັບໄປດ້ວຍພາຊະນະເປົ່າ ພວກເຂົາໄດ້ອັບອາຍ ແລະຂາຍໜ້າ ຈຶ່ງຄຸມຫົວຂອງຕົນເສຍ
[4]ເພາະເລື່ອງແຜ່ນດິນທີ່ແຫ້ງແລ້ງເນື່ອງຈາກບໍ່ມີຝົນຕົກເທິງແຜ່ນດິນ ຊາວນາທັງຫລາຍກໍອັບ-
ອາຍ ພວກເຂົາທັງຫລາຍຈຶ່ງຄຸມຫົວຂອງຕົນເສຍ [5]ແມ່ນກວາງໂຕແມ່ທີ່ຢູ່ໃນທ້ອງທົ່ງກໍປະຖິ້ມ
ລູກທີ່ເກີດໃໝ່ຂອງມັນເສຍ ເພາະວ່າບໍ່ມີຫຍ້າ [6]ລາປ່າຢືນຢູ່ເທິງບ່ອນສູງ ມັນຫັນໃຈເໝືອນກັບ
ໝາປ່າ ຕາຂອງມັນກໍມືດມົວ ເພາະວ່າບໍ່ມີຫຍ້າ"
[7]"ເຖິງວ່າຄວາມຊົ່ວຊ້າຂອງຂ້າພະອົງທັງຫລາຍກໍເປັນພະຍານຟ້ອງຂ້າພະອົງ ຂ້າແດ່ພຣະ-
ຜູ້ເປັນເຈົ້າ ຂໍພຣະອົງຊົງໂຜດ ເພື່ອເຫັນແກ່ພຣະນາມຂອງພຣະອົງ ດ້ວຍວ່າບັນດາການຊົ່ວ
ຮ້າຍຂອງຂ້າພະອົງທັງຫລາຍກໍຫລາຍຍິ່ງ ຂ້າພະອົງທັງຫລາຍເຮັດບາບຕໍ່ພຣະອົງ [8]ຂ້າແດ່
ພຣະອົງຜູ້ເປັນຄວາມຫວັງແຫ່ງ ອິສຣາເອນ ເປັນ ພຣະຜູ້ຊ່ອຍ ໃຫ້ລອດພົ້ນຂອງພວກເຂົາໃນ
ຍາມລຳບາກ ເຫດໃດພຣະອົງຈະຊົງເປັນເໝືອນແຂກເມືອງໃນແຜ່ນດິນ ຫລືເໝືອນຄົນເດີນ-
ທາງແວະອາໄສຄ້າງພຽງຄືນດຽວ [9]ເຫດໃດພຣະອົງຈະຊົງເປັນເໝືອນຊາຍທີ່ງົງງັນ ຫລືເໝືອນ
ຄົນທີ່ມີກຳລັງຫລາຍ ແຕ່ຊ່ອຍໃຜໃຫ້ລອດພົ້ນບໍ່ໄດ້ ຂ້າແດ່ພຣະຜູ້ເປັນເຈົ້າ ເຖິງປານນັ້ນກໍດີ
ພຣະອົງຊົງສະຖິດທ່າມກາງຂ້າພະອົງທັງຫລາຍ ຄົນເອີ້ນພວກຂ້າພະອົງໂດຍພຣະນາມຂອງ
ພຣະອົງ ຂໍຢ່າຊົງປະຂ້າພະອົງທັງຫລາຍໄວ້"
[10]ພຣະຜູ້ເປັນເຈົ້າກ່າວແກ່ຊົນຊາດນີ້ວ່າ "ພວກເຂົາທັງຫລາຍຮັກທີ່ຈະພະເນຈອນໄປເຊັ່ນນີ້
ພວກເຂົາບໍ່ຫ້າມຕີນຂອງຕົນໄວ້ ສະນັ້ນ ພຣະຜູ້ເປັນເຈົ້າຈຶ່ງບໍ່ຊົງຮັບພວກເຂົາ
[11]ບັດນີ້ ພຣະອົງຈະຊົງລະນຶກເຖິງຄວາມຊົ່ວຊ້າຂອງພວກເຂົາ ແລະລົງໂທດການຜິດບາບ
ຂອງພວກເຂົາ" ພຣະຜູ້ເປັນເຈົ້າຊົງບອກຂ້າພະເຈົ້າວ່າ, "ຢ່າຮ້ອງຂໍໃຫ້ເຮົາຊ່ອຍເຫລືອຄົນ
ເຫລົ່ານີ້. [12]ຖ້າຫາກຖືສິນອົດອາຫານ ເຮົາກໍຈະບໍ່ຟັງສຽງຮ້ອງໄຫ້ຂໍຄວາມຊ່ອຍເຫລືອຂອງພວກ
ເຂົາ ຖ້າຫາກເຜົາສັດແລະຖວາຍອາຫານແກ່ເຮົາ ເຮົາກໍຈະບໍ່ຮັບເອົາ ແຕ່ຈະຂ້າຄົນໃນເວລາ
ສົງຄາມ ໂດຍໃຫ້ອຶດຢາກ ແລະເຈັບໄຊດ້ວຍພະຍາດ."
[13]ແລ້ວຂ້າພະເຈົ້າໄດ້ກ່າວວ່າ, "ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງຊົງຊາບແລ້ວວ່າ ພວກຜູ້
ປະກາດພຣະຄຳຈະບອກປະຊາຊົນວ່າບໍ່ມີສົງຄາມ ແລະການອຶດຢາກດອກ ເພາະວ່າພຣະອົງ
ຈະໃຫ້ມີແຕ່ຄວາມສະຫງົບສຸກເທົ່ານັ້ນໃນແຜ່ນດິນຂອງພວກຂ້ານ້ອຍ."
[14]ແຕ່ພຣະຜູ້ເປັນເຈົ້າຊົງຕອບວ່າ, "ພວກຜູ້ປະກາດພຣະທຳຈະໃຊ້ນາມຂອງເຮົາເວົ້າຄຳຕົວະ
ເຮົາບໍ່ໄດ້ໃຊ້ໃຫ້ເຂົາໄປ ບໍ່ໄດ້ສັ່ງບອກພວກເຂົາ ສິ່ງທີ່ພວກເຂົາບອກເຈົ້າແມ່ນນິມິດທີ່ບໍ່ໄດ້ມາ
ຈາກເຮົາ ເປັນຄຳປະກາດທີ່ບໍ່ມີຄ່າ ແລະເປັນສິ່ງທີ່ພວກເຂົານຶກຝັນເອົາເອງ. [15]ເຮົາພຣະຜູ້-

ເປັນເຈົ້າ ຈະບອກເຈົ້າເຖິງສິ່ງທີ່ເຮົາຈະເຮັດກັບພວກທີ່ປະກາດພຣະທຳ ຜູ້ທີ່ເຮົາບໍ່ໄດ້ໃຊ້ໄປ ຄື
ພວກທີ່ເວົ້າໃນນາມຂອງເຮົາວ່າ ເສິກສົງຄາມ ແລະການອຶດຢາກຈະບໍ່ເກີດຂຶ້ນໃນແຜ່ນດິນນີ້
ເຮົາຈະຂ້າຜູ້ນັ້ນໃຫ້ຕາຍດ້ວຍເສິກສົງຄາມ ແລະການອຶດຢາກ. 16ປະຊາຊົນຜູ້ທີ່ໄດ້ຍິນພວກຜູ້
ປະກາດພຣະທຳກ່າວດັ່ງນີ້ ກໍຈະຕາຍດ້ວຍເສິກສົງຄາມ ແລະການອຶດຢາກເໝືອນກັນ ຊາກສົບ
ຂອງພວກເຂົາຈະຖືກຖິ້ມໄວ້ຕາມຖະໜົນໃນນະຄອນ ເຢຣູຊາເລັມ ແລະຈະບໍ່ມີຜູ້ໃດຝັງສົບຂອງ
ພວກເຂົາ ເຫດການນີ້ຈະເກີດຂຶ້ນກັບພວກເຂົາທັງໝົດ ທັງລູກເມຍຂອງພວກເຂົາດ້ວຍ ເຮົາຈະ
ເຮັດໃຫ້ພວກເຂົາໄດ້ຮັບຜົນຊົ່ວຍ້ອນການກະທຳຊົ່ວຂອງພວກເຂົາເອງ.

17 ດຽວນີ້ ເຈົ້າຈົ່ງເວົ້າກັບປະຊາຊົນວ່າ:
ຂ້າພະເຈົ້າຢາກຮ້ອງໄຫ້ຕະຫລອດໄປ
ຢາກໃຫ້ນ້ຳຕາໄຫລອອກຕະຫລອດມື້ຕະຫລອດຄືນ
ເພາະວ່າຊົນຊາດຂອງຂ້າພະເຈົ້າເຈັບໄຊຫລາຍ
ຍ້ອນພວກເຂົາຖືກທຳຮ້າຍຢ່າງຮຸນແຮງ.
18 ເມື່ອຂ້າພະເຈົ້າອອກໄປຕາມທົ່ງນາ
ກໍພົບເຫັນຊາກສົບຄົນຕາຍຍ້ອນເສິກສົງຄາມ
ເມື່ອເຂົ້າໄປໃນເມືອງ ກໍພົບເຫັນຄົນຕາຍຍ້ອນການອຶດຢາກ
ແຕ່ພວກຜູ້ປະກາດພຣະທຳ ແລະປະໂລຫິດໄດ້ເຮັດວຽກຕໍ່ໄປ
ໂດຍທີ່ພວກເຂົາບໍ່ຮູ້ວ່າມີຫຍັງໄດ້ເກີດຂຶ້ນ.

## ປະຊາຊົນສາລະພາບຜິດຕໍ່ພຣະຜູ້ເປັນເຈົ້າ

19 ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງຊົງປະຖິ້ມຊາວຢູດາ ເດັດຂາດແລ້ວບໍ?
ຊົງກຽດຊັງປະຊາຊົນເມືອງຊີໂອນ ແລ້ວບໍ?
ເປັນຫຍັງຈຶ່ງຊົງທຳຮ້າຍພວກຂ້ານ້ອຍຢ່າງໜັກ
ຈົນພວກຂ້ານ້ອຍບໍ່ສາມາດຮັກສາໃຫ້ດີໄດ້
ພວກຂ້ານ້ອຍໄດ້ລໍຄອຍຄວາມສະຫງົບສຸກ
ແຕ່ບໍ່ເຫັນຫຍັງເກີດຂຶ້ນເລີຍ
ພວກຂ້ານ້ອຍຫວັງວ່າຈະໄດ້ຮັບການຮັກສາໃຫ້ດີ
ແຕ່ໄພພິບັດກັບເກີດມາແທນ.
20 ຂ້າແດ່ພຣະຜູ້ເປັນເຈົ້າ ພວກຂ້ານ້ອຍຍອມສາລະພາບທີ່ໄດ້ເຮັດບາບ
ແລະທີ່ບັນພະບູລຸດຂອງພວກຂ້ານ້ອຍໄດ້ເຮັດກໍດີ
ພວກຂ້ານ້ອຍໄດ້ເຮັດບາບຕໍ່ສູ້ພຣະອົງແທ້.
21 ຢ່າຄຽດຊັງພວກຂ້ານ້ອຍທ້ອນ
ຈົ່ງເຫັນແກ່ພຣະນາມຂອງພຣະອົງ
ຂໍຢ່ານຳຄວາມເສື່ອມເສຍມາຍັງນະຄອນ ເຢຣູຊາເລັມ
ບ່ອນພຣະບັນລັງອັນສະຫງ່າລາສີຂອງພຣະອົງຕັ້ງຢູ່

ຂໍຈົ່ງຮັກສາຄຳໝັ້ນສັນຍາທີ່ພຣະອົງຊົງໃຫ້ໄວ້ກັບພວກຂ້ານ້ອຍ
ຂໍຢ່າຍົກເລີກເສຍ.
22 ຝົນບໍ່ໄດ້ຕົກລົງມາຍ້ອນພະຕ່າງຊາດ
ຫລືຍ້ອນທ້ອງຟ້າ
ມີແຕ່ພຣະອົງໆ ດຽວເທົ່ານັ້ນທີ່ເຮັດສິ່ງເຫລົ່ານີ້ໄດ້
ພວກຂ້ານ້ອຍຫວັງໃຈໃນພຣະອົງ.”

# ບົດທີ 15

## ຄາວພິພາກສາປະຊາຊົນຢູດາ

1ຕໍ່ມາ ພຣະຜູ້ເປັນເຈົ້າຊົງກ່າວຕໍ່ຂ້າພະເຈົ້າວ່າ, “ເຖິງແມ່ນວ່າໂມເຊ ແລະຊາມູເອນຈະຢືນ
ອ້ອນວອນຢູ່ຕໍ່ໜ້າເຮົາ ເຮົາກໍຈະບໍ່ມີໃຈເມດຕາປະຊາຊົນເຫລົ່ານີ້ເລີຍ. 2ຈົ່ງໃຫ້ພວກເຂົາໜີໄປ
ໃຫ້ພົ້ນສາຍຕາຂອງເຮົາເສຍ ຖ້າພວກເຂົາຖາມເຈົ້າວ່າ ຈະໃຫ້ພວກຂ້ອຍໄປໃສ? ຈົ່ງບອກເຂົາ
ດັ່ງນີ້:

ຈຳພວກທີ່ກຳນົດໃຫ້ຕາຍດ້ວຍເຊື້ອໂລກ
ກໍຈະຕາຍຢ່າງນັ້ນ
ຈຳພວກທີ່ກຳນົດໃຫ້ຕາຍດ້ວຍການອຶດຢາກ
ກໍຈະຕາຍຢ່າງນັ້ນ
ຈຳພວກທີ່ກຳນົດໃຫ້ຖືກຈັບໄປເປັນຊະເລີຍ
ກໍຈະຖືກຈັບໄປ.

3ເຮົາພຣະຜູ້ເປັນເຈົ້າໄດ້ຕັດສິນໃຈແລ້ວວ່າ ຈະໃຫ້ສິ່ງໜ້າຢ້ານສີ່ຢ່າງນີ້ເກີດຂຶ້ນກັບພວກເຂົາ
ຄືເຂົາຈະຕ້ອງຕາຍດ້ວຍເສິກສົງຄາມ ຊາກສົບຈະຖືກໝາດຶງແກ່ໄປ ຝູງນົກຈະສັບຕອດກິນ
ແລະເຫລືອນັ້ນສັດປ່າຈະກິນອີກ. 4ເຮົາຈະເຮັດໃຫ້ນາໆ ຊາດທົ່ວໂລກຕົກໃຈຢ້ານ ສິ່ງທີ່ເກີດ
ຂຶ້ນກັບພວກເຂົາເນື່ອງຈາກສິ່ງທີ່ ມານາເຊ ລູກຊາຍຂອງ ເຮເຊກີຢາ ໄດ້ເຮັດໃນນະຄອນ ເຢຣູ-
ຊາເລັມ ເມື່ອຄາວພຣະອົງຊົງເປັນກະສັດຂອງຊາວ ເຢຣູຊາເລັມ.”

5ເຢຣູຊາເລັມ ເອີຍ ໃຜຈະສົງສານເຈົ້າ ຫລືໃຜຈະເສຍໃຈກັບເຈົ້າ ຫລືໃຜຈະແວະມາຖາມທຸກ
ສຸກຂອງເຈົ້າ” 6ພຣະຜູ້ເປັນເຈົ້າກ່າວວ່າ “ເຈົ້າໄດ້ປະຕິເສດເຮົາ ເຈົ້າຖອຍຫລັງເລື້ອຍໄປ ເຮົາ
ຈຶ່ງຈະຍື່ນມືອອກໄປຕໍ່ສູ້ເຈົ້າແລະທຳລາຍເຈົ້າ ເຮົາເບື່ອຕໍ່ການຜ່ອນຜັນແລ້ວ

7ເຮົາຈະຝັດເຂົາດ້ວຍເຄື່ອງຝັດເຂົ້າໃນບັນດາປະຕູເມືອງແຫ່ງແຜ່ນດິນນັ້ນ ເຮົາຈະເຮັດໃຫ້
ລູກຂອງພວກເຂົາທັງຫລາຍຕາຍ ເຮົາຈະທຳລາຍປະຊາຊົນຂອງເຮົາ ເພາະພວກເຂົາບໍ່ໄດ້
ຖອຍຫລັງກັບຈາກພຶດຕິການຂອງຕົນ 8ເຮົາເຮັດໃຫ້ແມ່ໝ້າຍຂອງພວກເຂົາມີຫລາຍ ຍິ່ງກວ່າ
ເມັດດິນຊາຍໃນທະເລ ໃນຕອນທ່ຽງ ເຮົາໄດ້ນຳຜູ້ທຳລາຍມາສູ່ບັນດາແມ່ຂອງຄົນໜຸ່ມທັງ-
ຫລາຍ ເຮົາໄດ້ເຮັດໃຫ້ຄວາມຢ້ານຕົກໃຈຕົກລົງເໜືອລູກນັ້ນໂດຍໄວ 9ນາງທີ່ເກີດບຸດເຈັດຄົນກໍ
ອ່ອນກຳລັງ ນາງຕາຍໄປແລ້ວ ດວງອາທິດຂອງນາງຕົກເມື່ອຍັງເວັນຢູ່ ນາງໄດ້ຮັບຄວາມອັບ-

ອາຍ ແລະຂາຍໜ້າ ເຮົາຈະມອບຜູ້ທີ່ເຫລືອຢູ່ໃຫ້ແກ່ດາບຕໍ່ໜ້າສັດຕູຂອງເຂົາ” ພຣະຜູ້ເປັນເຈົ້າ
ກ່າວດັ່ງນີ້ແຫລະ

## ພຣະສັນຍາ ແລະການຂູ່ເຂັນ

[10]ແມ່ຂ້ອຍເອີຍ ວິບັດແກ່ຂ້ອຍ ທີ່ແມ່ເກີດຂ້ອຍມາເປັນຄົນທີ່ໃຫ້ເກີດການຍາດຊີງ ແລະການ
ຊິງດີແກ່ທົ່ວທັງແຜ່ນດິນ ຂ້ອຍກໍບໍ່ໄດ້ໃຫ້ກູ້ຢືມໂດຍຄິດເອົາດອກເບ້ຍ ຫລືຂ້ອຍກໍບໍ່ໄດ້ຢືມເຂົາ
ໂດຍຄິດເອົາດອກເບ້ຍ ແຕ່ພວກເຂົາທຸກຄົນສາບແຊ່ງຂ້ອຍ
[11]**ພຣະຜູ້ເປັນເຈົ້າ**ກ່າວວ່າ “ພວກທີ່ເຫລືອຢູ່ຈະຢູ່ເຢັນເປັນສຸກ ເຮົາຈະເຮັດໃຫ້ພວກສັດຕູເຮັດ
ດີຕໍ່ເຈົ້າໃນເວລາລຳບາກ ແລະໃນເວລາທຸກໃຈ [12]ເຫລັກຈະຫັກເຫລັກຈາກທິດເໜືອ ແລະ
ເຫລັກກ້າໄດ້ບໍ? [13]ບັນດາສິ່ງຂອງ ແລະຊັບສົມບັດຂອງເຈົ້າ ເຮົາຈະມອບໃຫ້ເປັນເຄື່ອງປຸ້ນທີ່ບໍ່
ຄິດຄ່າ ເພາະບາບທຸກຢ່າງຂອງເຈົ້າຕະຫລອດທົ່ວດິນແດນຂອງເຈົ້າ [14]ເຮົາຈະເຮັດໃຫ້ເຈົ້າໄປ
ກັບພວກສັດຕູຂອງເຈົ້າ ໄປຍັງແຜ່ນດິນຊຶ່ງເຈົ້າບໍ່ຮູ້ຈັກ ເພາະຄວາມຮ້າຍຂອງເຮົາ ເຮົາກໍ່ໄຟຂຶ້ນ
ຊຶ່ງຈະເຜົາເຈົ້າທັງຫລາຍເສຍ”

## ການຮ້ອງຄາງຂອງເຢເຣມີຢາ

[15]ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງຊົງຮູ້ ຂໍຊົງລະນຶກເຖິງຂ້າພະອົງ ແລະຢ້ຽມຢາມຂ້າພະອົງ
ຂໍຊົງແກ້ແຄ້ນຜູ້ຂົ່ມເຫັງຂ້າພະອົງ ເພື່ອຂ້າພະອົງຈະລອດພົ້ນຈາກການອົດກັ້ນພຣະໄທຂອງ
ພຣະອົງນັ້ນ ຂໍຢ່າຊົງນຳຂ້າພະອົງໄປເສຍ ຂໍຊົງລະນຶກວ່າຂ້າພະອົງທົນການຕິຕຽນດ້ວຍເຫັນ-
ແກ່ພຣະອົງ [16]ເມື່ອພົບພຣະທຳຂອງພຣະອົງແລ້ວ ຂ້າພະອົງກໍກິນເສຍ ພຣະທຳຂອງພຣະອົງ
ເປັນຄວາມຊື່ນບານແກ່ຂ້າພະອົງ ແລະເປັນຄວາມປິຕິຍິນດີແຫ່ງຈິດໃຈຂອງຂ້າພະອົງ ຂ້າແດ່
**ພຣະຜູ້ເປັນເຈົ້າ** ພຣະເຈົ້າຈອມໂຍທາ ເພາະວ່າພວກເຂົາເອີ້ນຂ້າພະອົງຕາມພຣະນາມຂອງ
ພຣະອົງ [17]ຂ້າພະອົງບໍ່ໄດ້ນັ່ງຢູ່ໃນໝູ່ຄົນທີ່ເຍາະເຍີ້ຍ ຂ້າພະອົງກໍບໍ່ໄດ້ປິຕິຍິນດີ ຂ້າພະອົງນັ່ງຢູ່
ຄົນດຽວ ເພາະເຫດພຣະຫັດຂອງພຣະອົງ ເພາະພຣະອົງຊົງໃຫ້ຂ້າພະອົງເຕັມໄປດ້ວຍຄວາມ
ຂັດເຄືອງໃຈ [18]ເຫດໃດຄວາມເຈັບຂອງຂ້າພະອົງຈຶ່ງບໍ່ໄດ້ຍັບຍັ້ງ ບາດແຜຂອງຂ້າພະອົງກໍຮັກ-
ສາບໍ່ຫາຍ ມັນບໍ່ຍອມຫາຍ ພຣະອົງຊົງເປັນເໝືອນຜູ້ຂີ້ຕົວະແກ່ຂ້າພະອົງບໍ ຫລືເໝືອນນ້ຳທີ່
ເຫືອດແຫ້ງ

## ພຣະຜູ້ເປັນເຈົ້າຊົງໃຫ້ເຢເຣມີຢາໝັ້ນໃຈໃນພຣະອົງ

[19]ເພາະສະນັ້ນ ພຣະຜູ້ເປັນເຈົ້າຈຶ່ງກ່າວວ່າ “ຖ້າເຈົ້າກັບມາ ເຮົາຈະໃຫ້ເຈົ້າກັບມາອີກ ແລະ
ເຈົ້າຈະຢືນຢູ່ຕໍ່ໜ້າເຮົາ ຖ້າເຈົ້າແຍກສິ່ງປະເສີດໄປຈາກສິ່ງຊົ່ວຊ້າ ເຈົ້າຈະເປັນເໝືອນປາກຂອງ
ເຮົາ ຈົ່ງໃຫ້ພວກເຂົາທັງຫລາຍຖອຍຫລັງກັບມາຫາເຈົ້າ ແຕ່ເຈົ້າຢ່າຫັນໄປຫາເຂົາ [20]ເຮົາຈະ
ເຮັດໃຫ້ເຈົ້າເປັນກຳແພງປ້ອມທອງສຳລິດແກ່ຊົນຊາດນີ້ ພວກເຂົາທັງຫລາຍກໍຈະຕໍ່ສູ້ກັບເຈົ້າ
ແຕ່ເຂົາຈະບໍ່ຊະນະເຈົ້າ ເພາະເຮົາຢູ່ກັບເຈົ້າ ຈະຊ່ວຍເຈົ້າໃຫ້ລອດ ແລະຊ່ວຍເຈົ້າໃຫ້ພົ້ນ”
ພຣະຜູ້ເປັນເຈົ້າກ່າວດັ່ງນີ້ [21]“ເຮົາຈະຊ່ວຍເຈົ້າໃຫ້ພົ້ນຈາກມືຂອງຄົນຊົ່ວ ແລະໄຖ່ເຈົ້າຈາກກຳມື
ຂອງຄົນອຳມະຫິດ”

# ບົດທີ 16

## ພຣະເຈົ້າບໍ່ໃຫ້ເຢເຣມີຢາມີຄອບຄົວ

1ພຣະທຳຂອງ ພຣະຜູ້ເປັນເຈົ້າ ມາຍັງຂ້າພະເຈົ້າວ່າ 2"ເຈົ້າຢ່າມີເມຍ ເຈົ້າຢ່າມີລູກຊາຍ ຫລື
ບຸດສາວໃນທີ່ນີ້ 3ເພາະ ພຣະຜູ້ເປັນເຈົ້າ ກ່າວດັ່ງນີ້ເລື່ອງລູກຊາຍ ແລະບຸດສາວທີ່ເກີດໃນທີ່ນີ້
ແລະຊົງກ່າວເຖິງພວກແມ່ທີ່ເກີດບຸດເຫລົ່ານັ້ນ ແລະພວກພໍ່ທີ່ໃຫ້ບັງເກີດຄົນເຫລົ່ານັ້ນໃນແຜ່ນ-
ດິນນີ້ວ່າ 4ພວກເຂົາທັງຫລາຍຈະຕາຍດ້ວຍພະຍາດຮ້າຍ ຈະບໍ່ມີການໂອດຄວນອາໄລພວກເຂົາ
ຫລືຈະບໍ່ມີໃຜຈັດການຝັງເຂົາ ພວກເຂົາຈະເປັນເໝືອນຂີ້ສັດທີ່ຢູ່ເທິງພື້ນແຜ່ນດິນ ຈະພິນາດ
ດ້ວຍດາບ ແລະການອຶດຫິວອາຫານ ແລະສົບທັງຫລາຍຂອງພວກເຂົາຈະເປັນອາຫານຂອງນົກ
ໃນອາກາດ ແລະຂອງສັດແຫ່ງແຜ່ນດິນ

5ເພາະ ພຣະຜູ້ເປັນເຈົ້າ ກ່າວດັ່ງນີ້ວ່າ ຢ່າເຂົ້າໄປໃນເຮືອນທີ່ຄວນໄວ້ທຸກ ຫລືໄປໂອດຄວນ
ຫລືໄປເສຍໃຈດ້ວຍ ພຣະຜູ້ເປັນເຈົ້າ ກ່າວວ່າ ເພາະເຮົາໄດ້ເອົາສັນຕິສຸກຂອງເຮົາໄປຈາກຊົນ
ຊາດນີ້ແລ້ວ ທັງຄວາມເມດຕາ ແລະຄວາມອີດູຕົນຂອງເຮົາ 6ທັງຜູ້ໃຫຍ່ຜູ້ນ້ອຍຈະຕາຍໃນ
ແຜ່ນດິນນີ້ ຈະບໍ່ມີໃຜຈັດການຝັງພວກເຂົາ ຈະບໍ່ມີໃຜມາໂອດຄວນອາໄລພວກເຂົາ ຫລືຂີດຕົວ
ຫລືມາແຖຫົວເພື່ອພວກເຂົາ 7ຈະບໍ່ມີຜູ້ໃດຈີກຕົວເອງເພື່ອພວກເຂົາເມື່ອໄວ້ທຸກ ເພື່ອຈະເລົ້າ
ໂລມເຂົາເຫດຄົນທີ່ຕາຍນັ້ນ ເພາະບິດາມານດາຂອງພວກເຂົາ ຈະບໍ່ມີໃຜມອບຖ້ວຍແຫ່ງຄວາມ
ເລົ້າໂລມໃຈໃຫ້ເຂົາດື່ມ

8ເຈົ້າຢ່າເຂົ້າໄປນັ່ງກິນ ແລະດື່ມກັບພວກເຂົາໃນເຮືອນທີ່ມີການລ້ຽງ 9ເພາະ ພຣະຜູ້ເປັນເຈົ້າ
ຈອມໂຍທາ ພຣະເຈົ້າ ແຫ່ງ ອິສຣາເອນ ກ່າວດັ່ງນີ້ວ່າ ເບິ່ງແມ ເຮົາຈະເຮັດໃຫ້ສຽງບັນເທີງ
ແລະສຽງມ່ວນຊື່ນ ສຽງເຈົ້າບ່າວ ແລະສຽງເຈົ້າສາວ ຂາດຈາກສະຖານທີ່ນີ້ໃນສາຍຕາຂອງເຈົ້າ
ທັງຫລາຍ ແລະໃນວັນຂອງເຈົ້າ

10ຕໍ່ມາເມື່ອເຈົ້າບອກບັນດາຖ້ອຍຄຳເຫລົ່ານີ້ແກ່ຊົນຊາດນີ້ ແລະພວກເຂົາທັງຫລາຍເວົ້າກັບ
ເຈົ້າວ່າ 'ເປັນຫຍັງ ພຣະຜູ້ເປັນເຈົ້າ ຈຶ່ງຊົງປະກາດຄວາມຮ້າຍທັງໝົດນີ້ໃຫ້ຕົກແກ່ເຮົາ ຄວາມ
ຊົ່ວຊ້າ ຂອງ ເຮົາ ຄື ຫຍັງ ແທ້ ເຮົາ ໄດ້ ເຮັດ ບາບ ຫຍັງ ຕໍ່ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງ ເຮົາບໍ'
11ແລ້ວເຈົ້າຈະກ່າວແກ່ພວກເຂົາທັງຫລາຍວ່າ 'ພຣະຜູ້ເປັນເຈົ້າກ່າວວ່າ ເພາະບັນພະບູລຸດຂອງ
ເຈົ້າໄດ້ປະຖິ້ມເຮົາ ແລະໄດ້ຕິດສອຍຫ້ອຍຕາມພະອື່ນ ແລະໄດ້ບົວລະບັດ ແລະນະມັດສະການ
ພະນັ້ນ ແລະໄດ້ປະຖິ້ມເຮົາ ບໍ່ໄດ້ຮັກສາພຣະບັນຍັດຂອງເຮົາ 12ແລະເພາະເຈົ້າທັງຫລາຍໄດ້
ເຮັດຊົ່ວຮ້າຍຍິ່ງກວ່າບັນພະບູລຸດຂອງເຈົ້າ ເພາະເບິ່ງແມ ເຈົ້າທຸກໆຄົນໄດ້ດຳເນີນຕາມຄວາມດື້
ດ້ານແຫ່ງຈິດໃຈອັນຊົ່ວຮ້າຍຂອງຕົນເອງ ປະຕິເສດບໍ່ຍອມຟັງເຮົາ 13ເພາະສະນັ້ນ ເຮົາຈະ
ໂຍນເຈົ້າອອກເສຍຈາກແຜ່ນດິນນີ້ເຂົ້າໄປໃນແຜ່ນດິນຊຶ່ງເຈົ້າ ຫລືບັນພະບູລຸດຂອງເຈົ້າບໍ່ຮູ້ຈັກ
ແລະບ່ອນນັ້ນເຈົ້າຈະບົວລະບັດພະອື່ນທັງກາງເວັນ ແລະກາງຄືນ ເພາະເຮົາຈະບໍ່ສະແດງ
ພຣະຄຸນແກ່ເຈົ້າເລີຍ'

14ພຣະຜູ້ເປັນເຈົ້າ ກ່າວວ່າ ເພາະສະນັ້ນ ເບິ່ງແມ ວັນເດືອນຈະມາເຖິງ ເມື່ອບໍ່ມີໃຜກ່າວຕໍ່
ໄປອີກວ່າ 'ພຣະຜູ້ເປັນເຈົ້າຜູ້ຊົງນຳປະຊາຊົນອິສຣາເອນຂຶ້ນມາຈາກແຜ່ນດິນເອຢິບ ຊົງພຣະ-

ຊົນຢູ່ແນ່ສັນໃດ' [15]ແຕ່ຈະເວົ້າວ່າ 'ພຣະຜູ້ເປັນເຈົ້າຜູ້ຊົງນຳປະຊາຊົນອິສຣາເອນຂຶ້ນມາຈາກ
ແດນເໜືອ ແລະຂຶ້ນມາຈາກບັນດາປະເທດຊຶ່ງພຣະອົງໄດ້ຊົງຂັບໄລ່ໃຫ້ໄປຢູ່ນັ້ນ ຊົງພຣະຊົນຢູ່
ສັນໃດ' ເພາະເຮົາຈະນຳພວກເຂົາກັບມາສູ່ແຜ່ນດິນຂອງເຂົາເອງ ຊຶ່ງເຮົາໄດ້ຍົກໃຫ້ບັນພະບູລຸດ
ຂອງພວກເຂົາແລ້ວນັ້ນ

[16]ພຣະຜູ້ເປັນເຈົ້າກ່າວວ່າ ເບິ່ງແມ ເຮົາຈະສົ່ງຊາວປະມົງມາເປັນຈຳນວນຫລາຍ ແລະຈະ
ຈັບພວກເຂົາ ພາຍຫລັງ ເຮົາຈະໃຫ້ເຂົາພານາຍພານມາເປັນຈຳນວນຫລາຍ ນາຍພານຈະລ່າ
ພວກເຂົາຕາມພູເຂົາທຸກແຫ່ງ ແລະຕາມໂນນພູທຸກໜ່ອຍ ແລະຕາມໂງ່ນຫີນ [17]ເພາະວ່າ ຕາ
ເຮົາເບິ່ງພຶດຕິການທັງໝົດຂອງພວກເຂົາ ຈະປິດບັງໄວ້ຈາກໜ້າເຮົາບໍ່ໄດ້ ແລະຄວາມຊົ່ວຊ້າ
ຂອງພວກເຂົາຈະເຊື່ອງພົ້ນຕາເຮົາບໍ່ໄດ້ [18]ແລະເຮົາຈະເພີ່ມການຕອບສະໜອງຄວາມຊົ່ວຊ້າ
ແລະບາບຂອງພວກເຂົາເປັນສອງເທົ່າ ເພາະພວກເຂົາໄດ້ເຮັດໃຫ້ແຜ່ນດິນເຮົາເປັນມົນທິນໄປ
ແລະເຮັດໃຫ້ມໍລະດົກຂອງເຮົາເຕັມໄປດ້ວຍຊາກຂອງສິ່ງໜ້າກຽດຊັງຂອງພວກເຂົາທັງຫລາຍ"

[19]ຂ້າແດ່ພຣະຜູ້ເປັນເຈົ້າ ກຳລັງ ແລະທີ່ກຳບັງອັນເຂັ້ມແຂງຂອງຂ້າພະອົງ ເປັນທີ່ລີ້ໄພ
ຂອງຂ້າພະອົງໃນມື້ຍາກລຳບາກ ບັນດາປະຊາຊາດຈະມາເຝົ້າພຣະອົງຈາກທີ່ສຸດປາຍໂລກ
ແລະທູນວ່າ "ບັນພະບູລຸດຂອງເຮົາບໍ່ໄດ້ຮັບມໍລະດົກອັນໃດ ນອກຈາກສິ່ງຂີ້ຕົວະ ສິ່ງຂາດຄ່າ
ແລະສິ່ງຊຶ່ງບໍ່ມີປະໂຫຍດຫຍັງໃນຕົວ [20]ມະນຸດຈະສ້າງພະໄວ້ສຳລັບຕົນເອງໄດ້ບໍ ສິ່ງຢ່າງນັ້ນບໍ່
ແມ່ນພະ"

[21]"ເພາະສະນັ້ນ ເບິ່ງແມ ເຮົາຈະເຮັດໃຫ້ເຂົາຮູ້ຈັກການເທື່ອນີ້ ເຮົາຈະເຮັດໃຫ້ເຂົາຮູ້ຈັກມື
ຂອງເຮົາ ແລະລິດທານຸພາບຂອງເຮົາ ແລະພວກເຂົາທັງຫລາຍຈະຮູ້ວ່ານາມຂອງເຮົາຄືພຣະ-
ຜູ້ເປັນເຈົ້າ"

# ບົດທີ 17

## ຈິດໃຈອັນຫລອກລວງຂອງຢູດາ

[1]"ບາບຂອງຢູດານັ້ນບັນທຶກໄວ້ດ້ວຍປາກກາເຫລັກ ດ້ວຍປາຍເພັດຈາລຶກໄວ້ເທິງແຜ່ນແຫ່ງ
ຈິດໃຈຂອງພວກເຂົາ ແລະທີ່ແຈແທ່ນບູຊາຂອງພວກເຂົາທັງຫລາຍ [2]ຝ່າຍລູກຫລານຂອງພວກ
ເຂົາກໍລະນຶກເຖິງແທ່ນບູຊາ ແລະບັນດາເສົາຮູບເຄົາລົບຂ້າງຕົ້ນໄມ້ສົດທຸກຕົ້ນເທິງໂນນພູສູງ
[3]ໂອ ພູເຂົາທີ່ຢູ່ກາງທົ່ງເອີຍ ເຮົາຈະໃຫ້ບັນດາສິ່ງຂອງແລະຊັບສົມບັດທຸກຢ່າງຂອງເຈົ້າເປັນ
ເຄື່ອງປຸ້ນ ແລະເຮົາຈະຖືວ່າປູຊະນີຍະສະຖານສູງທັງຫລາຍຂອງເຈົ້າເປັນຄວາມບາບຂອງເຈົ້າ
ຕະຫລອດທົ່ວບໍລິເວນຊາຍແດນຂອງເຈົ້າ [4]ເຈົ້າຈະຕ້ອງປ່ອຍມືຂອງເຈົ້າຈາກມໍລະດົກຊຶ່ງເຮົາໄດ້
ຍົກໃຫ້ແກ່ເຈົ້າ ແລະເຮົາຈະເຮັດໃຫ້ເຈົ້າບົວລະບັດສັດຕູຂອງເຈົ້າໃນແຜ່ນດິນຊຶ່ງເຈົ້າບໍ່ຮູ້ຈັກ
ເພາະຄວາມຮ້າຍຂອງເຮົາ ເຈົ້າກໍ່ໄຟຂຶ້ນຊຶ່ງຈະໄໝ້ຢູ່ເປັນນິດ"

[5]ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ "ຄົນທີ່ວາງໃຈໃນມະນຸດແລະໃຫ້ເນື້ອໜັງເປັນແຂນຂອງຕົນ
ແລະໃຈຫັນອອກຈາກພຣະຜູ້ເປັນເຈົ້າ ຄົນນັ້ນກໍເປັນທີ່ສາບແຊ່ງ [6]ລາວຈະເປັນເໝືອນພຸ່ມໄມ້
ທີ່ຢູ່ໃນທະເລຊາຍ ແລະຈະບໍ່ເຫັນຄວາມດີອັນໃດມາເຖິງເລີຍ ລາວຈະອາໄສຢູ່ໃນແຜ່ນດິນທີ່

ແຕກລະແຫງໃນຖິ່ນແຫ້ງແລ້ງກັນດານ ໃນແຜ່ນດິນເຄັມທີ່ບໍ່ມີຄົນອາໄສ

## ຄົນທີ່ວາງໃຈໃນພຣະຜູ້ເປັນເຈົ້າຍ່ອມໄດ້ຮັບພຣະພອນ

7ຄົນທີ່ວາງໃຈໃນ ພຣະຜູ້ເປັນເຈົ້າ ຍ່ອມໄດ້ຮັບພຣະພອນ ຄືຜູ້ທີ່ມີຄວາມວາງໃຈໃນ ພຣະຜູ້-
ເປັນເຈົ້າ 8ລາວຈະເປັນເໝືອນຕົ້ນໄມ້ທີ່ປູກໄວ້ແຄມນໍ້າ ຊຶ່ງຢັ່ງຮາກຂອງມັນອອກໄປຂ້າງແມ່ນໍ້າ
ເມື່ອແດດສ່ອງມາເຖິງກໍຈະບໍ່ສັງເກດ ເພາະໃບຂອງມັນຂຽວຢູ່ສະເໝີ ແລະຈະບໍ່ກະວົນກະວາຍ
ໃນປີທີ່ແຫ້ງແລ້ງ ເພາະມັນບໍ່ຢຸດທີ່ຈະອອກຜົນ” 9ຈິດໃຈກໍເປັນໂຕຫລອກລວງຫລາຍກວ່າສິ່ງ
ໃດທັງໝົດ ມັນເສື່ອມໂຊມເໝືອນສັດຮ້າຍ ຜູ້ໃດຈະຮູ້ຈັກໃຈນັ້ນໄດ້ 10“ເຮົາຄື ພຣະຜູ້ເປັນເຈົ້າ
ກວດຄົ້ນເບິ່ງຈິດ ແລະທົດລອງເບິ່ງໃຈ ເພື່ອໃຫ້ແກ່ທຸກຄົນຕາມການປະພຶດຂອງເຂົາ ຕາມຜົນ
ແຫ່ງການກະທຳຂອງພວກເຂົາ” 11ເໝືອນນົກກະທາຟັກໄຂ່ ແຕ່ບໍ່ໃຫ້ອອກເປັນຕົວສັນໃດ ຄົນ
ທີ່ໄດ້ຄວາມຮັ່ງມີມາຢ່າງບໍ່ເປັນທຳກໍສັນນັ້ນ ເມື່ອເຖິງກາງໄວ ມັນກໍຫວິດຈາກຄົນນັ້ນເສຍ ແລະ
ໃນຕອນປາຍຂອງລາວ ລາວຈະເປັນຄົນໂຫດຮ້າຍໂງ່ຈ້າ

12ທີ່ຕັ້ງແຫ່ງສະຖານທີ່ບໍລິສຸດຂອງເຮົາທັງຫລາຍ ເປັນພຣະທີ່ນັ່ງອັນຮຸ່ງເຮືອງ ຊຶ່ງຕັ້ງຢູ່ສູງ
ຕັ້ງແຕ່ເດີມນັ້ນ 13ຂ້າແດ່ ພຣະຜູ້ເປັນເຈົ້າ ຄວາມຫວັງແຫ່ງ ອິສຣາເອນ ບັນດາຄົນເຫລົ່ານັ້ນທີ່
ປະຖິ້ມພຣະອົງຈະຕ້ອງຮັບຄວາມອັບອາຍ ບັນດາຄົນທັງປວງທີ່ຫັນໄປຈາກເຮົາຈະຕ້ອງຈາລຶກ
ໄວ້ໃນແຜ່ນດິນໂລກ ເພາະພວກເຂົາໄດ້ປະຖິ້ມ ພຣະຜູ້ເປັນເຈົ້າ ຜູ້ເປັນແຫລ່ງນໍ້າແຫ່ງຊີວິດ
14ຂ້າແດ່ ພຣະຜູ້ເປັນເຈົ້າ ຂໍຊົງຮັກສາຂ້າພະອົງ ຂ້າພະອົງຈະໄດ້ຫາຍ ຂໍຊົງຊ່ວຍຂ້າພະອົງໃຫ້
ລອດພົ້ນ ຂ້າພະອົງຈຶ່ງຈະລອດພົ້ນ ເພາະພຣະອົງເປັນທີ່ສັນລະເສີນຂອງຂ້າພະອົງ 15ເບິ່ງແມ
ພວກເຂົາທັງຫລາຍໄດ້ເວົ້າກັບຂ້າພະອົງວ່າ “ພຣະທຳຂອງ ພຣະຜູ້ເປັນເຈົ້າ ຢູ່ທີ່ໃດ ໃຫ້ມາເຖີດ”
16ຂ້າພະອົງບໍ່ໄດ້ຫາໂອກາດເລີກຈາກການເປັນຜູ້ລ້ຽງແກະທີ່ຕາມພຣະອົງໄປ ຂ້າພະອົງກໍບໍ່ປະ-
ສົງວັນແຫ່ງຄວາມຈິບຫາຍ ພຣະອົງຊົງຮູ້ແລ້ວ ສິ່ງຊຶ່ງອອກມາຈາກຮີມປາກຂອງຂ້າພະອົງກໍ
ຖືກຕ້ອງຕໍ່ພຣະພັກຂອງພຣະອົງ 17ຂໍຢ່າຊົງເປັນເຫດໃຫ້ຂ້າພະອົງໂກດຮ້າຍ ພຣະອົງຊົງເປັນ-
ຄວາມຫວັງຂອງຂ້າພະອົງໃນມື້ທີ່ບໍ່ດີ 18ຜູ້ໃດຂົ່ມເຫັງຂ້າພະອົງ ຂໍໃຫ້ເຂົາໄດ້ຮັບຄວາມອັບອາຍ
ແຕ່ຂໍຢ່າໃຫ້ຂ້າພຣະອົງໄດ້ຮັບຄວາມອັບອາຍ ຂໍໃຫ້ເຂົາໂກດຮ້າຍ ແຕ່ຢ່າໃຫ້ຂ້າພະອົງໂກດຮ້າຍ
ຂໍຊົງນຳມື້ຮ້າຍໆມາຕົກເໜືອພວກເຂົາ ຂໍຊົງທຳລາຍພວກເຂົາດ້ວຍການທຳລາຍອັນຊັບຊ້ອນ

19ພຣະຜູ້ເປັນເຈົ້າ ກ່າວແກ່ຂ້າພະເຈົ້າດັ່ງນີ້ວ່າ “ຈົ່ງໄປຢືນໃນປະຕູບຸດແຫ່ງປະຊາຊົນ ຊຶ່ງ
ບັນດາກະສັດແຫ່ງຢູດາສະເດັດເຂົ້າ ແລະຊຶ່ງພະອົງສະເດັດອອກ ແລະໃນປະຕູທັງຫລາຍຂອງ
ເຢຣູຊາເລັມ 20ແລະກ່າວແກ່ພວກເຂົາວ່າ ‘ທ່ານທັງຫລາຍຜູ້ເປັນກະສັດຂອງຢູດາ ບັນດາຄົນ
ຢູດາ ແລະຊາວ ເຢຣູຊາເລັມ ທັງໝົດ ຜູ້ຊຶ່ງເຂົ້າທາງປະຕູເຫລົ່ານີ້ ຈົ່ງຟັງພຣະທຳຂອງ ພຣະຜູ້-
ເປັນເຈົ້າ 21ພຣະຜູ້ເປັນເຈົ້າ ກ່າວດັ່ງນີ້ວ່າ ຈົ່ງລະວັງເພື່ອເຫັນແກ່ຊີວິດຂອງເຈົ້າທັງຫລາຍ ຢ່າ
ໄດ້ຫາບຫາມຫຍັງໃນວັນສະບາໂຕ ຫລືນຳຂອງນັ້ນເຂົ້າທາງບັນດາປະຕູ ເຢຣູຊາເລັມ 22ແລະ
ຢ່າຫາບຫາມເຄື່ອງຂອງເຈົ້າອອກຈາກເຮືອນໃນວັນສະບາໂຕ ຫລືເຮັດວຽກໃດໆ ແຕ່ຈົ່ງຮັກສາ
ວັນສະບາໂຕໄວ້ໃຫ້ບໍລິສຸດ ດັ່ງທີ່ເຮົາໄດ້ບັນຊາບັນພະບູລຸດຂອງເຈົ້າໄວ້ 23ເຖິງປານນັ້ນ ພວກ
ເຂົາກໍບໍ່ເຊື່ອຟັງ ຫລືຫງ່ຽງຫູຟັງ ແຕ່ເຮັດຄໍຂອງຕົນໃຫ້ແຂງ ເພື່ອຈະບໍ່ໄດ້ຍິນ ແລະບໍ່ຮັບຄຳສັ່ງ-

ສອນ [24]ພຣະຜູ້ເປັນເຈົ້າກ່າວວ່າ ຕໍ່ມາຖ້າເຈົ້າເຊື່ອຟັງເຮົາ ແລະບໍ່ນຳພາລະໃດໆເຂົ້າມາທາງ
ປະຕູເມືອງນີ້ໃນວັນສະບາໂຕ ແຕ່ຮັກສາວັນສະບາໂຕໃຫ້ບໍລິສຸດ ແລະບໍ່ເຮັດວຽກໃນມື້ນັ້ນ
[25]ແລ້ວຈະມີກະສັດ ແລະເຈົ້ານາຍ ຜູ້ປະທັບເທິງບັນລັງແຫ່ງດາວິດສະເດັດເຂົ້າທາງປະຕູທັງ-
ຫລາຍຂອງເມືອງນີ້ ສະເດັດມາໃນລົດຮົບ ແລະເທິງມ້າ ທັງບັນດາກະສັດແລະເຈົ້ານາຍຂອງ
ພະອົງ ທັງຄົນຢູດາ ແລະຊາວເຢຣູຊາເລັມ ແລະເມືອງນີ້ຈະດຳລົງຢູ່ເປັນນິດ [26]ປະຊາຊົນຈະ
ມາຈາກຫົວເມືອງແຫ່ງຢູດາ ແລະທີ່ຢູ່ຮອບເຢຣູຊາເລັມ ຈາກແຜ່ນດິນເບັນຢາມິນ ຈາກທົ່ງ-
ພຽງ ຈາກພູເຂົາ ແລະຈາກພາກໃຕ້ ນຳເອົາເຄື່ອງເຜົາບູຊາ ແລະເຄື່ອງຖວາຍບູຊາ ເຄື່ອງບູຊາ
ພືດຜົນເປັນເມັດ ແລະກຳຍານ ນຳເຄື່ອງບູຊາແຫ່ງການສັນລະເສີນມາຍັງວິຫານຂອງພຣະຜູ້-
ເປັນເຈົ້າ [27]ແຕ່ຖ້າເຈົ້າທັງຫລາຍບໍ່ຟັງເຮົາໃນການຖືຮັກສາວັນສະບາໂຕໃຫ້ບໍລິສຸດ ແຕ່ແບກ
ພາລະເຂົ້າທາງປະຕູທັງຫລາຍຂອງເຢຣູຊາເລັມໃນວັນສະບາໂຕ ແລ້ວເຮົາຈະກໍ່ໄຟໄວ້ໃນປະຕູ
ເມືອງເຫລົ່ານັ້ນ ແລະໄຟນັ້ນຈະເຜົາຜານລາຊະວັງທັງຫລາຍຂອງເຢຣູຊາເລັມ ແລະຈະດັບກໍບໍ່
ໄດ້'"

# ບົດທີ 18

## ເຢເຣມີຢາທີ່ເຮືອນຂອງຊ່າງປັ້ນໝໍ້

[1]ພຣະຜູ້ເປັນເຈົ້າຊົງບອກຂ້າພະເຈົ້າວ່າ, [2]"ຈົ່ງລົງໄປຍັງເຮືອນຂອງຊ່າງປັ້ນໝໍ້ ແລ້ວເຮົາຈະ
ເວົ້າໃຫ້ເຈົ້າຟັງຢູ່ທີ່ນັ້ນ." [3]ດ້ວຍເຫດນີ້ ຂ້າພະເຈົ້າຈຶ່ງລົງໄປທີ່ນັ້ນ ແລະເຫັນຊ່າງປັ້ນໝໍ້ກຳລັງ
ຊຸ່ນໝໍ້ຂອງລາວຢູ່. [4]ໃນເວລານັ້ນ ເມື່ອໃດລາວປັ້ນດິນໜຽວເປັນພາຊະນະຢ່າງໜຶ່ງບໍ່ໄດ້ ລາວ
ກໍຈະເອົາດິນໜຽວອັນເກົ່ານັ້ນ ເຮັດເປັນພາຊະນະຢ່າງອື່ນອີກ.

[5-6]ຂະນະນັ້ນ ພຣະຜູ້ເປັນເຈົ້າຊົງບອກຂ້າພະເຈົ້າວ່າ, "ປະຊາຊົນອິສຣາເອນເອີຍ ເຮົາຈະ
ເຮັດກັບພວກເຈົ້າເໝືອນຢ່າງຊ່າງປັ້ນໝໍ້ເຮັດກັບດິນໜຽວນັ້ນບໍ່ໄດ້ບໍ? ດິນໜຽວຢູ່ໃນມືຂອງຊ່າງ
ປັ້ນໝໍ້ສັນໃດ ພວກເຈົ້າກໍຢູ່ໃນມືຂອງເຮົາສັນນັ້ນ ເຮົາ ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ແຫລະ.
[7]ຖ້າເວລາໃດເຮົາກ່າວວ່າຈະຖອນຮາກ ຈະຮື້ຖິ້ມ ຈະທຳລາຍຊາດ ຫລືອານາຈັກໃດໆ. [8]ແຕ່ຖ້າ
ຊາດນັ້ນຫັນໜີຈາກການເຮັດຊົ່ວເສຍ ເຮົາກໍຈະປ່ຽນໃຈຈາກສິ່ງທີ່ເຮົາກ່າວວ່າຈະເຮັດນັ້ນ. [9]ອີກ
ຢ່າງໜຶ່ງ ຖ້າເຮົາກ່າວວ່າຈະປູກ ຫລືສ້າງປະເທດ ຫລືອານາຈັກໃດຂຶ້ນ. [10]ແຕ່ຖ້າຊາດນັ້ນເຮັດ
ຊົ່ວ ບໍ່ເຊື່ອຟັງເຮົາ ເຮົາກໍຈະປ່ຽນໃຈຈາກສິ່ງທີ່ເຮົາກ່າວວ່າຈະເຮັດນັ້ນເສຍ. [11]ດັ່ງນັ້ນແຫລະ
ເຈົ້າຈົ່ງບອກປະຊາຊົນຢູດາ ແລະຊາວນະຄອນເຢຣູຊາເລັມວ່າ ເຮົາກຳລັງວາງແຜນການຕໍ່ສູ້
ແລະຈັດຕຽມການລົງໂທດພວກເຂົາຢູ່ ຈົ່ງບອກໃຫ້ພວກເຂົາເຊົາດຳເນີນຊີວິດໃນທາງບາບເສຍ
ໃຫ້ປ່ຽນທາງ ແລະສິ່ງທີ່ກຳລັງເຮັດຢູ່ນັ້ນ. [12]ແຕ່ພວກເຂົາຈະຕອບວ່າ ພວກເຮົາບໍ່ປ່ຽນດອກ ຈະ
ເຮັດຊົ່ວຕໍ່ໄປຕາມຄວາມພໍໃຈຂອງເຮົາ."

[13-14]ດັ່ງນັ້ນແຫລະ ເຮົາ ພຣະຜູ້ເປັນເຈົ້າຈຶ່ງກ່າວວ່າ:

ຈົ່ງເວົ້າໃຫ້ນາໆ ຊາດຟັງວ່າ
  ພູສູງເລບານອນບໍ່ເຄີຍຂາດຫິມະ

ກະແສນ້ຳເຢັນໃນພູບໍ່ເຄີຍບົກແຫ້ງ
ສິ່ງເຫລົ່ານີ້ບໍ່ເຄີຍມີຈັກເທື່ອ
ແຕ່ປະຊາຊົນອິສຣາເອນໄດ້ເຮັດສິ່ງໜຶ່ງອັນໜ້າຢ້ານຫລາຍ.
15 ຄື ພວກເຂົາໄດ້ລືມເຮົາເສຍ
ໄດ້ເຜົາເຄື່ອງຫອມບູຊາແກ່ພະອື່ນ
ໄດ້ຕຳສະດຸດໃນທາງທີ່ຕົນຍ່າງ
ບໍ່ໄດ້ເຮັດຕາມຮີດເກົ່າຄອງຫລັງອີກຕໍ່ໄປ
ແຕ່ເດີນຕາມທາງທີ່ຍັງບໍ່ໄດ້ດັດແປງ.
16 ໄດ້ເຮັດໃຫ້ແຜ່ນດິນນີ້ເສື່ອມເສຍໄປ
ຈະເປັນແຜ່ນດິນທີ່ໜ້າກຽດຊັງຕະຫລອດໄປເປັນນິດ
ຄົນທັງປວງທີ່ຜ່ານໄປນັ້ນຈະເຫັນສິ່ງອັນໜ້າຕື່ນຕົກໃຈ
ພວກເຂົາຈະສັ່ນຫົວດ້ວຍຄວາມປະຫລາດໃຈ.
17 ເຮົາຈະເຮັດໃຫ້ໄພ່ພົນຂອງເຮົາກະຈັດກະຈາຍໄປ
ຕໍ່ໜ້າສັດຕູຂອງເຮົາ
ເໝືອນລົມຕາເວັນອອກພັດເປົ່າຂີ້ດິນ
ເຮົາຈະຫັນຫລັງໃສ່ພວກເຂົາເມື່ອໄພພິບັດມາເຖິງ
ແລະຈະບໍ່ຊ່ອຍເຫລືອພວກເຂົາ.”

18ຂະນະທີ່ປະຊາຊົນພາກັນເວົ້າວ່າ, “ໃຫ້ພວກເຮົາຫາເລື່ອງໂຈມຕີ ແລະກຳຈັດເຢເຣມີຢາ
ເທາະ ເພາະວ່າ ພວກເຮົາມີພວກປະໂລຫິດສຳລັບສັ່ງສອນ ມີພວກນັກປາດສຳລັບປຶກສາ ແລະ
ມີພວກຜູ້ປະກາດພຣະທຳສຳລັບເທດສະໜາພຣະຄຳຂອງພຣະເຈົ້າຢູ່ ສະນັ້ນ ຈົ່ງຢ່າຟັງສິ່ງທີ່
ລາວເວົ້າ.”

19ດ້ວຍເຫດນີ້ ເຢເຣມີຢາຈຶ່ງອ້ອນວອນວ່າ, “ຂ້າແດ່ພຣະຜູ້ເປັນເຈົ້າ ຂໍພຣະອົງຊົງຟັງຖ້ອຍ
ຄຳທີ່ຂ້ານ້ອຍຈະກາບທູນ ແລະຟັງເລື່ອງທີ່ສັດຕູກ່າວຮ້າຍປ້າຍສີໃສ່ຂ້ານ້ອຍແດ່ທ້ອນ. 20ຄືວ່າ
ພວກເຂົາຈະເຮັດການຮ້າຍຕອບແທນການດີຂອງຂ້ານ້ອຍ ດ້ວຍວ່າພວກເຂົາໄດ້ຂຸດຂຸມໃຫ້ຂ້າ-
ນ້ອຍຕົກລົງ ຂໍຊົງໂຜດລະນຶກເຖິງທີ່ຂ້ານ້ອຍໄດ້ມາກາບທູນບໍ່ໃຫ້ພຣະອົງລົງໂທດພວກເຂົາ
ດ້ວຍພຣະພິໂລດ. 21ຂ້າແດ່ພຣະຜູ້ເປັນເຈົ້າ ບັດນີ້ ຂໍພຣະອົງຊົງເຮັດໃຫ້ລູກຂອງພວກເຂົາອຶດ
ຢາກຈົນເຖິງແກ່ຄວາມຕາຍ ໃຫ້ພວກເຂົາຕາຍໃນເສິກສົງຄາມ ພວກແມ່ຍິງກໍໃຫ້ສູນເສຍຜົວ
ແລະລູກຂອງຕົນ ໃຫ້ຜູ້ຊາຍຕາຍດ້ວຍພະຍາດຕ່າງໆ ພວກຄົນໜຸ່ມກໍໃຫ້ຕາຍໃນສະໜາມຮົບ.
22ຂໍຊົງໂຜດສົ່ງກອງທະຫານເຂົ້າໄປປຸ້ນບ້ານເຮືອນຂອງພວກເຂົາແບບທີ່ເຂົາບໍ່ຮູ້ຕົວ ຂໍຊົງເຮັດ
ໃຫ້ພວກເຂົາຮ້ອງໄຫ້ດ້ວຍຄວາມຢ້ານ ເພາະວ່າເຂົາໄດ້ຂຸດຂຸມໃຫ້ຂ້ານ້ອຍຕົກລົງ ແລະໄດ້ເຮັດ
ແຮ້ວດັກຈັບຂ້ານ້ອຍ. 23ຂ້າແດ່ພຣະຜູ້ເປັນເຈົ້າ ແຕ່ພຣະອົງຊົງຮູ້ຈັກແຜນການທີ່ພວກເຂົາຈະ
ສັງຫານຂ້ານ້ອຍແລ້ວ ຂໍຢ່າໃຫ້ອະໄພຄວາມຜິດ ແລະຍົກໂທດໃຫ້ເຂົາເລີຍ ຈົ່ງເຮັດໃຫ້ພວກ
ເຂົາລົ້ມລົງດ້ວຍຄວາມພ່າຍແພ້ ແລະລົງໂທດດ້ວຍພຣະພິໂລດທ້ອນ.”

# ບົດທີ 19

## ໝໍ້ແຕກ

[1]ພຣະຜູ້ເປັນເຈົ້າ ຊົງບອກໃຫ້ຂ້າພະເຈົ້າ ໄປຊື້ເອົາໝໍ້ດິນໜ່ວຍໜຶ່ງ ແລ້ວບອກໃຫ້ເອົາຫົວໜ້າ
ປະຊາຊົນກັບປະໂລຫິດຜູ້ອາວຸໂສບາງຄົນ [2]ຈົ່ງອອກໄປທາງປະຕູເມືອງທີ່ມີຊື່ວ່າ ປະຕູໂຮງປັ້ນ
ໝໍ້ດິນ ແລ້ວໃຫ້ໄປຍັງຮ່ອມພູເບັນ ຮິນໂນມ. [3]ໃຫ້ຂ້າພະເຈົ້າປະກາດພຣະຄຳຂອງພຣະອົງຢູ່ທີ່
ນັ້ນ ພຣະຜູ້ເປັນເຈົ້າ ຊົງບອກໃຫ້ຂ້າພະເຈົ້າເວົ້າວ່າ, “ພວກກະສັດຢູດາ ແລະຊາວ ເຢຣູຊາເລັມ
ເອີຍ ຈົ່ງຟັງເທີ້ນ ເຮົາ ພຣະຜູ້ເປັນເຈົ້າ ອົງຍິ່ງໃຫຍ່ຂອງຊາວ ອິສຣາເອນ ໄດ້ກ່າວດັ່ງນີ້ ເຮົາຈະ
ນຳໄພພິບັດມາຍັງບ່ອນນີ້ ຊຶ່ງຈະດັງກ້ອງກັງວານຢູ່ໃນຫູຂອງທຸກໆ ຄົນທີ່ໄດ້ຍິນເລື່ອງນີ້. [4]ທີ່
ເຮັດດັ່ງນີ້ກໍເພາະວ່າປະຊາຊົນໄດ້ປະຖິ້ມເຮົາ ແລະໄດ້ເຮັດໃຫ້ສະຖານທີ່ນີ້ເສື່ອມເສຍດ້ວຍການ
ເຜົາຖວາຍບູຊາແກ່ພະອື່ນ ຄືພະທີ່ພວກເຂົາເອງ ຫລືບັນພະບູລຸດຂອງເຂົາ ຫລືພວກກະສັດ
ຂອງຊາວ ຢູດາ ບໍ່ຮູ້ຈັກ ພວກເຂົາໄດ້ຂ້າຄົນຜູ້ບໍ່ມີຄວາມຜິດຈຳນວນຫລາຍຢູ່ໃນສະຖານທີ່ນີ້.
[5]ໄດ້ກໍ່ແທ່ນສຳລັບເຜົາລູກຂອງຕົນຖວາຍບູຊາແກ່ພະບາອານ ເຮົາບໍ່ເຄີຍບົກ ບໍ່ເຄີຍສັ່ງໃຫ້
ພວກເຂົາເຜົາລູກຂອງຕົນຖວາຍບູຊາເລີຍ. [6]ດັ່ງນີ້ແຫລະ ເຮົາ ພຣະຜູ້ເປັນເຈົ້າ ຈຶ່ງກ່າວວ່າ
ເມື່ອເວລານັ້ນມາເຖິງ ສະຖານທີ່ນີ້ຈະບໍ່ໄດ້ເອີ້ນວ່າໂຕເຟັດ ຫລືຮ່ອມພູເບັນ ຮິນໂນມອີກ ແຕ່ຈະ
ຖືກເອີ້ນວ່າຮ່ອມພູແຫ່ງການຂ້າຟັນກັນ. [7]ໃນສະຖານທີ່ນີ້ເຮົາຈະທຳລາຍແຜນການທັງປວງຂອງ
ຊາວຢູດາ ແລະຊາວ ເຢຣູຊາເລັມ ຈະໃຫ້ສັດຕູຂອງພວກເຂົາມີໄຊຊະນະ ແລະຂ້າເຂົາຕາຍໃນ
ສະໜາມຮົບ ຈະໃຫ້ນົກແລະສັດປ່າທັງຫລາຍກິນຊາກສົບຂອງພວກເຂົາ. [8]ຈະນຳໄພພິບັດອັນ
ໜ້າຢ້ານເຊັ່ນນີ້ມາຍັງເມືອງນີ້ ເພື່ອທຸກໆ ຄົນທີ່ຍ່າງຜ່ານໄປມາຈະໄດ້ຕົກໃຈ ແລະອັດສະຈັນ
ໃນເຫດການທີ່ເກີດຂຶ້ນ. [9]ເມື່ອເວລາສັດຕູປິດລ້ອມເມືອງ ແລະຈະຂ້າພວກເຂົານັ້ນ ເຮົາຈະເຮັດ
ໃຫ້ຜູ້ທີ່ອາໄສຢູ່ໃນນັ້ນກິນລູກຂອງຕົນ ແລະກິນເພື່ອນບ້ານເປັນອາຫານໃນເວລາຄັບຂັນ.”
[10]ແລ້ວ ພຣະຜູ້ເປັນເຈົ້າ ຊົງບອກໃຫ້ຂ້າພະເຈົ້າ ທຸບໝໍ້ຕໍ່ໜ້າຄົນທັງຫລາຍທີ່ມາດ້ວຍກັນ.
[11]ແລະຊົງບອກໃຫ້ເວົ້າຕໍ່ພວກເຂົາວ່າ, “ພຣະຜູ້ເປັນເຈົ້າ ຜູ້ມີອຳນາດຍິ່ງໃຫຍ່ຊົງກ່າວດັ່ງນີ້ ເຮົາ
ຈະທຸບຕີປະຊາຊົນ ແລະມ້າງເພເມືອງນີ້ຢ່າງດຽວກັນກັບທັບໝໍ້ດິນ ຊຶ່ງຈະຈອດໃຫ້ດີອີກບໍ່ໄດ້
ພວກເຂົາຈະຝັງສົບຄົນຕາຍໄວ້ໃນ ໂຕເຟັດ ເພາະວ່າໃນບ່ອນອື່ນຈະບໍ່ມີບ່ອນຝັງ. [12]ອັນນີ້ແມ່ນ
ສິ່ງທີ່ເຮົາຈະເຮັດຕໍ່ເມືອງ ແລະຄົນຜູ້ຢູ່ໃນເມືອງນີ້ ຈະເຮັດໃຫ້ເປັນເໝືອນ ໂຕເຟັດ ເຮົາ ພຣະຜູ້-
ເປັນເຈົ້າ ໄດ້ກ່າວໄວ້ດັ່ງນີ້ແຫລະ. [13]ເຮືອນທັງຫລາຍໃນນະຄອນ ເຢຣູຊາເລັມ ແລະວັງທັງ-
ຫລາຍຂອງກະສັດ ຢູດາ ຈະເສື່ອມເສຍເໝືອນດັ່ງຮ່ອມພູ ໂຕເຟັດ ເພາະວ່າພວກເຂົາຈະໄດ້ເຜົາ
ເຄື່ອງຫອມຖວາຍດວງດາວ ແລະໄດ້ເທເຄື່ອງດື່ມຖວາຍແກ່ພະອື່ນຢູ່ເທິງຫລັງຄາເຮືອນເຫລົ່າ
ນີ້.”

[14]ແລ້ວຂ້າພະເຈົ້າໄດ້ອອກຈາກ ໂຕເຟັດ ຄືບ່ອນ ພຣະຜູ້ເປັນເຈົ້າ ຊົງໃຊ້ຂ້າພະເຈົ້າໄປປະກາດ
ພຣະທຳຂອງພຣະອົງນັ້ນ ຂ້າພະເຈົ້າໄດ້ຢືນຢູ່ໃນເດີ່ນພຣະວິຫານ ແລະເວົ້າກັບປະຊາຊົນທັງ
ປວງວ່າ, [15]ພຣະຜູ້ເປັນເຈົ້າ ຜູ້ມີອຳນາດຍິ່ງໃຫຍ່ຂອງຊາວ ອິສຣາເອນ ຊົງກ່າວວ່າ, “ເຮົາຈະນຳ
ໄພພິບັດມາຍັງ ເມືອງນີ້ ແລະມາຍັງບ້ານເມືອງທັງຫລາຍທີ່ຢູ່ໃກ້ຄຽງ ເພາະວ່າພວກເຈົ້າດື້ດ້ານ

ແລະບໍ່ເຊື່ອຟັງຄຳຂອງເຮົາ.”

# ບົດທີ 20

## ເຢເຣມີຢາຖືກຈັບ

[1]ເມື່ອປັດຊູ (ລູກຊາຍຂອງອິມເມ ຜູ້ເປັນປະໂລຫິດ ແລະເປັນຫົວໜ້າພວກຜູ້ຮັບໃຊ້ໃນ
ພຣະວິຫານ) ໄດ້ຍິນເຢເຣມີຢາຜູ້ປະກາດພຣະຄຳເວົ້າດັ່ງນີ້. [2]ເພິ່ນກໍຕີເຢເຣມີຢາ ແລະຈັບໃສ່
ກັບຕີນໄວ້ໃນປະຕູສູງ ເບັນຢາມິນທີ່ວິຫານນັ້ນ. [3]ມື້ອື່ນເຊົ້າມາ ປັດຊູກໍເອົາເຢເຣມີຢາອອກ
ຈາກກັບຕີນ ໃນຂະນະນັ້ນ ເຢເຣມີຢາເວົ້າຕໍ່ປັດຊູວ່າ, “ພຣະຜູ້ເປັນເຈົ້າບໍ່ໄດ້ເອີ້ນເຈົ້າວ່າປັດຊູ
ແຕ່ຈະເອີ້ນເຈົ້າວ່າຜູ້ຢ້ານກົວຄວາມວຸ້ນວາຍໃນທຸກໆ ບ່ອນ. [4]ເພາະວ່າພຣະຜູ້ເປັນເຈົ້າຊົງກ່າວ
ດັ່ງນີ້: ເຮົາຈະເຮັດໃຫ້ເຈົ້າກັບມິດສະຫາຍຂອງເຈົ້າຢ້ານກົວວຸ້ນວາຍ ເຈົ້າຈະເຫັນພວກເຂົາທັງ
ໝົດຕາຍດ້ວຍດາບຂອງສັດຕູ ເຮົາຈະມອບຊາວຢູດາທັງປວງຢູ່ໃຕ້ອຳນາດຂອງກະສັດບາບີ-
ໂລນ ພຣະອົງຈະຈັບເອົາບາງຄົນໄປເປັນຊະເລີຍເຖິງເມືອງບາບີໂລນ ແລະຄົນອື່ນໆ ກໍຈະຖືກ
ຂ້າຕາຍ. [5]ເຮົາຈະໃຫ້ສັດຕູຂອງພວກເຂົາປຸ້ນເອົາຊັບສົມບັດ ແລະຂອງມີຄ່າທັງປວງໃນເມືອງນີ້
ໄປ ແມ່ນແຕ່ພະລາຊະສົມບັດອັນມີຄ່າຂອງກະສັດຢູດາ ແລະທຸກໆ ສິ່ງກໍຈະຖືກນຳໄປຍັງ
ເມືອງບາບີໂລນ. [6]ສຳລັບເຈົ້າ ຄອບຄົວຂອງເຈົ້າ ຈະຖືກຈັບໄປຍັງບາບີໂລນເໝືອນກັນ ເຈົ້າ
ຈະຕາຍ ແລະຖືກຝັງໄວ້ນຳມິດສະຫາຍຜູ້ເຈົ້າເວົ້າຕົວະເຂົານັ້ນ.”

## ການຮ້ອງຄາງຂອງເຢເຣມີຢາ

[7]ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງຊົງຫລອກລວງຂ້າພະອົງ ແລະຂ້າພະອົງກໍຖືກຫລອກລວງ
ພຣະອົງຊົງມີກຳລັງຫລາຍກວ່າຂ້າພະອົງ ແລະພຣະອົງກໍຊະນະ ຂ້າພະອົງເປັນທີ່ໃຫ້ເຂົາຫົວ-
ຂວັນ ທຸກຄົນເຍາະເຍີ້ຍຂ້າພະອົງ [8]ເພາະວ່າຂ້າພະອົງເວົ້າເມື່ອໃດ ຂ້າພະອົງຮ້ອງໃຫ້ຊ່ວຍ
ຂ້າພະອົງກ່າວວ່າ “ຄວາມທາລຸນ ແລະການປຸ້ນ” ເພາະວ່າພຣະທຳຂອງພຣະຜູ້ເປັນເຈົ້າໄດ້
ເປັນເຫດໃຫ້ຂ້າພະອົງເປັນທີ່ຕຳໜິ ແລະເຍາະເຍີ້ຍຕະຫລອດມື້ [9]ແລ້ວຂ້າພະອົງກ່າວວ່າ “ຂ້າ-
ພະເຈົ້າຈະບໍ່ອ້າງເຖິງພຣະອົງ ຫລືກ່າວໃນພຣະນາມຂອງພຣະອົງອີກ” ແຕ່ພຣະທຳຂອງພຣະ-
ອົງຢູ່ໃນໃຈຂອງຂ້າພະອົງເໝືອນໄຟໄໝ້ ອັດຢູ່ໃນກະດູກຂອງຂ້າພະອົງ ແລະຂ້າພະອົງກໍ
ອ່ອນເພຍທີ່ຕ້ອງອັດໄວ້ ແລະຂ້າພະອົງກໍອັດໄວ້ບໍ່ໄຫວ [10]ເພາະຂ້າພະອົງໄດ້ຍິນສຽງຊຸບຊິບ
ເປັນຈຳນວນຫລາຍ ຄວາມຕົກໃຈຢ້ານຢູ່ຮອບທຸກດ້ານ ພວກເຂົາກ່າວວ່າ “ໃສ່ຄວາມລາວ ໃຫ້
ເຮົາໃສ່ຄວາມລາວ” ມິດສະຫາຍທີ່ຄຸ້ນເຄີຍທັງໝົດຂອງຂ້າພະອົງເຝົ້າເບິ່ງຄວາມຫລົ້ມຈົມຂອງ
ຂ້າພະອົງ ກ່າວວ່າ “ລາວຈະຖືກຫລອກລວງແລ້ວເຮົາຈະຊະນະລາວໄດ້ ແລະຈະແກ້ແຄ້ນ
ລາວ” [11]ແຕ່ພຣະຜູ້ເປັນເຈົ້າຊົງຢູ່ຂ້າງຂ້າພະເຈົ້າດັ່ງນັກຮົບທີ່ໜ້າຢ້ານ ເພາະສະນັ້ນ ຜູ້ຂົ່ມເຫັງ
ຂ້າພະເຈົ້າຈະສະດຸດ ພວກເຂົາຈະບໍ່ຊະນະຂ້າພະເຈົ້າ ພວກເຂົາຈະອັບອາຍຂາຍໜ້າ ເພາະຈະ
ບໍ່ຈະເລີນຂຶ້ນ ຄວາມອັບອາຍໄຮ້ກຽດເປັນນິດຂອງພວກເຂົານັ້ນຈະບໍ່ມີວັນລືມ [12]ຂ້າແດ່ພຣະຜູ້-
ເປັນເຈົ້າຈອມໂຍທາ ຜູ້ຊົງທົດລອງຄົນຊອບທຳ ຜູ້ຫອດພຣະເນດທັງໃຈ ແລະຈິດ ຂໍໃຫ້ຂ້າ-
ພະອົງໄດ້ເຫັນການແກ້ແຄ້ນຂອງພຣະອົງເໜືອພວກເຂົາທັງຫລາຍ ເພາະຂ້າພະອົງໄດ້ທູນສະ-

ເໜີຄະດີຂອງຂ້າພະອົງແລ້ວ [13]ຈົ່ງຮ້ອງເພງຖວາຍ ພຣະຜູ້ເປັນເຈົ້າ ຈົ່ງສັນລະເສີນ ພຣະຜູ້-
ເປັນເຈົ້າ ເພາະວ່າພຣະອົງຊົງຊ່ວຍຊີວິດຂອງຜູ້ຂັດສົນໃຫ້ພົ້ນຈາກມືຂອງຜູ້ເຮັດຄວາມຊົ່ວຮ້າຍ
[14]ຂໍໃຫ້ມື້ທີ່ຂ້າພະເຈົ້າເກີດມານັ້ນຖືກສາບແຊ່ງ ຢ່າໃຫ້ມື້ທີ່ແມ່ຂອງຂ້າພະເຈົ້າເກີດຂ້າພະເຈົ້າໄດ້
ຮັບພອນ [15]ຂໍໃຫ້ຊາຍຄົນນັ້ນຖືກສາບແຊ່ງ ຄືຄົນທີ່ນຳຂ່າວໄປບອກພໍ່ຂ້າພະເຈົ້າວ່າ "ລູກຊາຍ
ຄົນໜຶ່ງເກີດມາແກ່ທ່ານແລ້ວ" ອັນຈະເຮັດໃຫ້ພໍ່ມີຄວາມຍິນດີຫລາຍ [16]ຂໍໃຫ້ຊາຍຄົນນັ້ນເໝືອນ
ກັບບັນດາເມືອງຊຶ່ງ ພຣະຜູ້ເປັນເຈົ້າຊົງລົ້ມເສຍ ແລະບໍ່ໄດ້ຊົງກັບພຣະໄທ ຂໍໃຫ້ພວກເຂົາໄດ້ຍິນ
ສຽງຮ້ອງໃຫ້ຊ່ວຍໃນຕອນເຊົ້າ ແລະໃຫ້ໄດ້ຍິນສຽງໂວຍວາຍໃນຕອນທ່ຽງ [17]ເພາະພວກເຂົາບໍ່
ໄດ້ຂ້າຂ້າພະເຈົ້າເສຍຕັ້ງແຕ່ໃນມົດລູກ ໃຫ້ແມ່ຂອງຂ້າພະເຈົ້າເປັນຂຸມຝັງສົບຂອງຂ້າພະເຈົ້າ
ແລະມົດລູກນັ້ນຈະໄດ້ໃຫຍ່ຢູ່ເປັນນິດ [18]ເປັນຫຍັງຂ້າພະເຈົ້າຈຶ່ງອອກມາຈາກມົດລູກ ມາເຫັນ
ຄວາມລຳບາກ ແລະຄວາມທຸກ ແລະວັນຄືນຂອງຂ້າພະເຈົ້າກໍສິ້ນເປືອງໄປດ້ວຍຄວາມອັບອາຍ

# ບົດທີ 21

## ຄຳຕັກເຕືອນຈາກເຢເຣມີຢາ

[1]ພຣະທຳຊຶ່ງມາຈາກ ພຣະຜູ້ເປັນເຈົ້າ ເຖິງ ເຢເຣມີຢາ ເມື່ອກະສັດ ເຊເດກີຢາ ຊົງໃຊ້ໃຫ້ປັດຊູ
ລູກຊາຍ ມັນກີຢາ ແລະ ເຊຟານີຢາ ລູກຊາຍ ມາອາເສຢາ ໄປຫາ ເຢເຣມີຢາ ວ່າ [2]"ຂໍຈົ່ງທູນຖາມ
ພຣະຜູ້ເປັນເຈົ້າ ເພື່ອເຮົາ ເພາະ ເນບູກາດເນັດຊາ ກະສັດ ບາບີໂລນ ກຳລັງເຮັດສົງຄາມກັບເຮົາ
ບາງທີ ພຣະຜູ້ເປັນເຈົ້າ ຈະຊົງກະທຳກັບເຮົາຕາມບັນດາລາຊະກິດອັນມະຫັດສະຈັນຂອງພຣະອົງ
ແລະຈະຊົງເຮັດໃຫ້ ເນບູກາດເນັດຊາ ຖອຍທັບໄປຈາກເຮົາ" [3]ແລ້ວ ເຢເຣມີຢາ ບອກພວກເຂົາທັງ
ສອງວ່າ "ທ່ານຈົ່ງທູນແກ່ ເຊເດກີຢາ ດັ່ງນີ້ວ່າ [4]'ພຣະຜູ້ເປັນເຈົ້າ ພຣະເຈົ້າ ແຫ່ງ ອິສຣາເອນ ກ່າວ
ດັ່ງນີ້ວ່າ ເບິ່ງແມ ເຮົາຈະຖອຍຫລັງກັບຈາກກອງທັບອັນຢູ່ໃນມືຂອງເຈົ້າ ແລະຊຶ່ງເຈົ້າໃຊ້ສູ້ຮົບ
ກັບກະສັດ ແຫ່ງ ບາບີໂລນ ແລະກັບຄົນ ບາບີໂລນ ຊຶ່ງກຳລັງປິດລ້ອມເຈົ້າຢູ່ນອກກຳແພງ ແລະ
ເຮົາຈະຮອບຮວມມັນມາໄວ້ໃນໃຈກາງ ເມືອງນີ້ [5]ເຮົາເອງຈະຕໍ່ສູ້ກັບເຈົ້າດ້ວຍມືທີ່ຢຽດອອກ ແລະ
ດ້ວຍແຂນທີ່ແຂງແຮງ ດ້ວຍຄວາມຮ້າຍ ດ້ວຍຄວາມຮ້ອນຮົນແລະພິໂລດ [6]ແລະເຮົາຈະໂຈມຕີ
ຊາວກຸງນີ້ ທັງຄົນ ແລະສັດ ແລ້ວຈະຕາຍລົງດ້ວຍພະຍາດລະບາດຢ່າງໜັກ [7]ພຣະຜູ້ເປັນເຈົ້າ
ກ່າວວ່າ ພາຍຫລັງ ເຮົາຈະມອບ ເຊເດກີຢາ ກະສັດຂອງ ຢູດາ ແລະບັນດາຂ້າລາຊະການຂອງ
ລາວ ແລະປະຊາຊົນ ເມືອງນີ້ຊຶ່ງລອດຕາຍຈາກພະຍາດລະບາດ ດາບ ແລະການອຶດຫິວອາ-
ຫານໄວ້ໃນມືຂອງ ເນບູກາດເນັດຊາ ກະສັດ ແຫ່ງ ບາບີໂລນ ແລະມອບໄວ້ໃນມືຂອງສັດຕູຂອງ
ພວກເຂົາທັງຫລາຍ ໃນມືຂອງຄົນ ເຫລົ່ານັ້ນທີ່ສະແຫວງຫາຊີວິດຂອງພວກເຂົາ ເພິ່ນຈະຟັນ
ພວກເຂົາເສຍດ້ວຍຄົມດາບ ເພິ່ນຈະບໍ່ສົງສານພວກເຂົາ ຫລືໄວ້ຊີວິດເຂົາ ຫລືມີຄວາມເມດຕາ
ຕໍ່ພວກເຂົາ'

[8]ແລະເຈົ້າຈົ່ງເວົ້າກັບຊົນຊາດນີ້ວ່າ 'ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເບິ່ງແມ ເຮົາໄດ້ຕັ້ງການ
ດຳເນີນຊີວິດແລະທາງແຫ່ງຄວາມຕາຍໄວ້ຕໍ່ໜ້າເຈົ້າ [9]ຄົນທີ່ຢູ່ໃນເມືອງນີ້ຈະຕາຍເສຍດ້ວຍດາບ
ດ້ວຍການອຶດຫິວອາຫານ ແລະດ້ວຍພະຍາດລະບາດ ແຕ່ຜູ້ທີ່ອອກໄປຍອມມອບຕົວກັບຊົນ

ຊາດບາບີໂລນ ຜູ້ປິດລ້ອມຢູ່ນັ້ນ ກໍຈະມີຊີວິດຢູ່ໄດ້ ແລະຈະມີຊີວິດຂອງຕົນເປັນບຳເໜັດແຫ່ງ
ການເສິກສົງຄາມ [10]ພຣະຜູ້ເປັນເຈົ້າກ່າວວ່າ ເພາະເຮົາໄດ້ມຸ້ງໜ້າຕໍ່ສູ້ເມືອງນີ້ດ້ວຍຄວາມຮ້າຍ
ບໍ່ແມ່ນດ້ວຍຄວາມດີ ຄືເມືອງນີ້ຈະຖືກມອບໄວ້ໃນມືຂອງກະສັດແຫ່ງບາບີໂລນ ແລະເພິ່ນຈະ
ເຜົາມັນເສຍດ້ວຍໄຟ'

## ການກ່າວໂທດກຸງເຢຣູຊາເລັມ

[11]ຈົ່ງກ່າວຕໍ່ເຊື້ອສາຍຂອງກະສັດຢູດາວ່າ 'ຈົ່ງຟັງພຣະທຳຂອງພຣະຜູ້ເປັນເຈົ້າ [12]ເຊື້ອສາຍ
ດາວິດເອີຍ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ຈົ່ງໃຫ້ຄວາມຍຸດຕິທຳໃນຕອນເຊົ້າ ຈົ່ງຊ່ວຍຜູ້ທີ່ຖືກ
ປຸ້ນໃຫ້ພົ້ນຈາກມືຜູ້ທີ່ບີບບັງຄັບ ຢ້ານວ່າຄວາມພິໂລດຂອງເຮົາຈະອອກໄປເໝືອນໄຟ ແລະເຜົາ
ໄໝ້ຢ່າງທີ່ບໍ່ມີໃຜດັບໄດ້ ເພາະການກະທຳອັນຊົ່ວຮ້າຍຂອງເຈົ້າທັງຫລາຍ [13]ຊາວລຸ່ມເອີຍ ເບິ່ງ
ແມ ເຮົາຕໍ່ສູ້ເຈົ້າ ສີລາແຫ່ງທົ່ງພຽງເອີຍ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ ພວກເຈົ້າຜູ້ກ່າວວ່າ
"ໃຜຈະລົງມາຕໍ່ສູ້ກັບເຮົາ ຫລືໃຜຈະເຂົ້າມາໃນບ່ອນຢູ່ອາໄສຂອງເຮົາ" [14]ພຣະຜູ້ເປັນເຈົ້າກ່າວ
ວ່າ ເຮົາຈະລົງໂທດເຈົ້າທັງຫລາຍຕາມຜົນແຫ່ງການກະທຳຂອງເຈົ້າ ເຮົາຈະກໍ່ໄຟໄວ້ໃນປ່າ
ຂອງເມືອງນັ້ນ ແລະໄຟນັ້ນຈະເຜົາຜານສິ່ງຕ່າງໆທີ່ຢູ່ຮອບເມືອງນັ້ນ'"

# ບົດທີ 22

## ຄຳຜູ້ປະກາດພຣະທຳຕໍ່ກະສັດແຫ່ງຢູດາ

[1]ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ຈົ່ງລົງໄປຍັງລາຊະສຳນັກຂອງກະສັດຢູດາ ແລະກ່າວຖ້ອຍ
ຄຳເຫລົ່ານີ້ບ່ອນນັ້ນ [2]ວ່າ "ຂ້າແດ່ກະສັດແຫ່ງຢູດາ ຜູ້ປະທັບເທິງພະທີ່ນັ່ງຂອງດາວິດ ຈົ່ງຟັງ
ພຣະທຳຂອງພຣະຜູ້ເປັນເຈົ້າ ທັງຕົວທ່ານ ຂ້າລາຊະການຂອງທ່ານ ແລະປະຊາຊົນຂອງທ່ານ
ຜູ້ເຂົ້າມາໃນປະຕູເມືອງນີ້ [3]ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ຈົ່ງເຮັດຄວາມຍຸດຕິທຳແລະຄວາມ
ຊອບທຳ ຈົ່ງຊ່ວຍຜູ້ທີ່ຖືກປຸ້ນໃຫ້ພົ້ນມືຂອງຜູ້ທີ່ບີບບັງຄັບ ແລະຢ່າໄດ້ເຮັດຄວາມຜິດ ຫລືຄວາມ
ທາລຸນແກ່ຊົນຕ່າງດ້າວ ລູກກຳພ້າພໍ່ ແລະແມ່ໝ້າຍ ຫລືຫລັ່ງເລືອດທີ່ຂາດຄວາມຜິດໃຫ້ເຖິງ
ຕາຍໃນສະຖານທີ່ນີ້ [4]ຖ້າທ່ານເຮັດສິ່ງນີ້ແທ້ໆແລ້ວຈະມີກະສັດຜູ້ປະທັບເທິງພະທີ່ນັ່ງຂອງດາ-
ວິດເຂົ້າມາທາງປະຕູຂອງພະລາຊະວັງນີ້ ສະເດັດມາໂດຍລົດຮົບ ແລະມ້າ ທັງຕົວກະສັດ ບັນ-
ດາຂ້າລາຊະການ ແລະປະຊາຊົນຂອງທ່ານນັ້ນ [5]ແຕ່ຖ້າທ່ານບໍ່ຟັງຖ້ອຍຄຳເຫລົ່ານີ້ ພຣະຜູ້-
ເປັນເຈົ້າກ່າວວ່າ ເຮົາປະຕິຍານໃນນາມຂອງເຮົາເອງວ່າ ລາຊະສຳນັກນີ້ຈະເປັນທີ່ຮົກຮ້າງ
ເສຍ"

[6]ເພາະພຣະຜູ້ເປັນເຈົ້າກ່າວດັ່ງນີ້ແກ່ລາຊະສຳນັກແຫ່ງກະສັດຂອງຢູດາ ວ່າ "ເຈົ້າເປັນ
ເໝືອນກິເລອາດແກ່ເຮົາ ເປັນດັ່ງຍອດພູເຂົາເລບານອນ ເຖິງປານນັ້ນ ເຮົາຈະເຮັດເຈົ້າໃຫ້
ເປັນຖິ່ນແຫ້ງແລ້ງກັນດານແນ່ນອນ ເປັນເມືອງທີ່ບໍ່ມີຄົນອາໄສຢູ່ໄດ້ [7]ເຮົາຈະຕຽມຜູ້ທຳລາຍໄວ້
ຕໍ່ສູ້ເຈົ້າ ຕ່າງກໍມີອາວຸດຂອງຕົນ ແລະພວກເຂົາຈະຕັດຕົ້ນແປກຢ່າງດີຂອງເຈົ້າລົງ ແລະໂຍນ
ເຂົ້າໃນໄຟ

[8]ແລະປະຊາຊາດເປັນຈຳນວນຫລາຍຈະຜ່ານເມືອງນີ້ໄປ ແລະທຸກຄົນຈະເວົ້າກັບເພື່ອນບ້ານ

ຂອງຕົນວ່າ ‘ເປັນຫຍັງ ພຣະຜູ້ເປັນເຈົ້າ ຈຶ່ງຊົງກະທຳເຊັ່ນນີ້ແກ່ເມືອງໃຫຍ່ນີ້’ 9ແລະພວກເຂົາ
ທັງຫລາຍຈະຕອບວ່າ ‘ເພາະເຂົາໄດ້ປະຖິ້ມຄຳໝັ້ນສັນຍາຂອງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງ
ເຂົາ ແລະນະມັດສະການ ກັບບົວລະບັດພະອື່ນ’”

10ຢ່າຮ້ອງໄຫ້ອາໄລແກ່ຜູ້ທີ່ຕາຍໄປ ຢ່າເສົ້າໂສກໃຈດ້ວຍພວກເຂົາເລີຍ ແຕ່ຈົ່ງຮ້ອງໄຫ້ຮ່ຳ-
ໄຮອາໄລຜູ້ທີ່ໄປແລ້ວ ເພາະພວກເຂົາຈະບໍ່ໄດ້ກັບມາເຫັນບ້ານເກີດເມືອງນອນຂອງຕົນອີກ

11ເພາະ ພຣະຜູ້ເປັນເຈົ້າ ກ່າວດັ່ງນີ້ແຫລະກ່ຽວກັບຊານລູມ ລູກຊາຍ ໂຢສີຢາ ກະສັດແຫ່ງຢູ-
ດາ ຜູ້ຊຶ່ງຄອງລາດແທນໂຢສີຢາ ແລະຜູ້ທີ່ໄປຈາກສະຖານທີ່ນີ້ “ເພິ່ນຈະບໍ່ໄດ້ກັບມາບ່ອນນີ້ອີກ
12ເພິ່ນຈະສິ້ນຊີວິດໃນບ່ອນທີ່ເຂົາເຈົ້າຈັບເພິ່ນໄປເປັນຊະເລີຍ ແລະເພິ່ນຈະບໍ່ເຫັນແຜ່ນດິນນີ້ອີກ
ເລີຍ”

13“ວິບັດແກ່ຜູ້ສ້າງວັງຂອງຕົນດ້ວຍຄວາມອະທຳ ແລະສ້າງຫ້ອງຊັ້ນເທິງໄວ້ດ້ວຍຄວາມອະ
ຍຸດຕິທຳ ຜູ້ທີ່ເຮັດໃຫ້ເພື່ອນບ້ານຂອງຕົນບົວລະບັດຕົນ ໂດຍບໍ່ໄດ້ຫຍັງເລີຍ ແລະບໍ່ໄດ້ຈ່າຍຄ່າ
ຈ້າງໃຫ້ແກ່ເຂົາ 14ຜູ້ກ່າວວ່າ ‘ເຮົາຈະສ້າງວັງໃຫຍ່ຢູ່ເອງ ກັບມີຫ້ອງຊັ້ນເທິງກວ້າງຂວາງ ແລະ
ເຈາະປ່ອງຢ້ຽມໃຫ້ຫ້ອງນັ້ນ ແລະແອ້ມຝາດ້ວຍໄມ້ແປກ ແລະທາດ້ວຍສີແດງເຂັ້ມ’ 15ເຈົ້າຄິດ
ວ່າເຈົ້າຈະຄອງລາຊະສົມບັດ ເພາະເຈົ້າແຂ່ງໄມ້ແປກກັນບໍ ພໍ່ຂອງເຈົ້າບໍ່ໄດ້ກິນແລະດື່ມ ແລະ
ເຮັດຄວາມຍຸດຕິທຳ ກັບຄວາມທ່ຽງທຳ ກໍຢູ່ເຢັນເປັນສຸກບໍ? 16ເພິ່ນພິພາກສາຄະດີຂອງຄົນຈົນ
ແລະຄົນຂັດສົນ ເພິ່ນກໍຢູ່ເຢັນເປັນສຸກ ເຮັດຢ່າງນີ້ເປັນການຮູ້ຈັກເຮົາ” ພຣະຜູ້ເປັນເຈົ້າ ກ່າວ
ດັ່ງນີ້ແຫລະ 17“ແຕ່ເຈົ້າມີຕາ ແລະໃຈໄວ້ເພື່ອຄວາມໂລບ ເພື່ອຫລັ່ງເລືອດທີ່ຂາດຄວາມຜິດໃຫ້
ເຖິງຕາຍ ແລະເພື່ອປະຕິບັດການບີບບັງຄັບ ແລະຄວາມທາລຸນ” 18ເພາະສະນັ້ນ ພຣະຜູ້ເປັນ-
ເຈົ້າ ຈຶ່ງກ່າວດັ່ງນີ້ກ່ຽວກັບ ເຢໂຮຢາກິມ ລາຊະບຸດຂອງ ໂຢສີຢາ ກະສັດແຫ່ງ ຢູດາ ວ່າ “ພວກ
ເຂົາທັງຫລາຍຈະບໍ່ໂອດຄວນອາໄລວ່າ ‘ອະນິດຈັງ ອ້າຍເອີຍ’ ຫລື ‘ອະນິດຈັງ ເອື້ອຍເອີຍ’
ພວກເຂົາຈະບໍ່ຄວນຄາງອາໄລວ່າ ‘ອະນິດຈັງ ພະອົງ’ ຫລື ‘ອະນິດຈັງ ກະສັດ ເອີຍ’ 19ເພິ່ນ
ຈະຖືກຝັງໄວ້ເໝືອນຝັງລາ ຄືຖືກລາກໄປໂຍນຖິ້ມໄວ້ຂ້າງນອກປະຕູເມືອງ ເຢຣູຊາເລັມ 20ຈົ່ງ
ຂຶ້ນໄປທີ່ ເລບານອນ ແລະຮ້ອງວ່າ ແລະຈົ່ງເປັ່ງສຽງຂອງເຈົ້າໃນເມືອງ ບາຊານ ຈົ່ງຮ້ອງຈາກ
ທາງຜ່ານຂ້າງນອກ ເພາະວ່າຄົນຮັກທັງໝົດຂອງເຈົ້າຖືກທຳລາຍເສຍແລ້ວ 21ເຮົາໄດ້ເວົ້າກັບ
ເຈົ້າເມື່ອເຈົ້າຢູ່ເຢັນເປັນສຸກ ແຕ່ເຈົ້າກ່າວວ່າ ‘ເຮົາຈະບໍ່ຟັງ’ ນີ້ເປັນວິທີການຂອງເຈົ້າຕັ້ງແຕ່ຍັງ
ໜຸ່ມໆ ຄືເຈົ້າບໍ່ເຊື່ອຟັງສຽງຂອງເຮົາ 22ລົມຈະທຳລາຍຜູ້ລ້ຽງແກະທັງໝົດຂອງເຈົ້າ ແລະບັນດາ
ຄົນຮັກຂອງເຈົ້າຈະໄປເປັນຊະເລີຍ ແລ້ວເຈົ້າຈະອັບອາຍຂາຍໜ້າຢ່າງແນ່ນອນ ເນື່ອງດ້ວຍ
ຄວາມຊົ່ວທັງໝົດຂອງເຈົ້າ 23ຊາວເມືອງ ເລບານອນ ເອີຍ ທີ່ສ້າງຮັງຢູ່ທ່າມກາງໄມ້ແປກ ເຈົ້າ
ຈະໄດ້ຮັບຄວາມກະລຸນາຈັກເທົ່າໃດ ເມື່ອຄວາມເຈັບປວດມາເໜືອເຈົ້າ ເໝືອນຄວາມເຈັບປວດ
ຂອງຍິງທີ່ເກີດບຸດ”

24ພຣະຜູ້ເປັນເຈົ້າ ກ່າວວ່າ “ເຮົາມີຊີວິດຢູ່ສັນໃດ ເຖິງວ່າ ໂກນີຢາ ລາຊະບຸດຂອງ ເຢໂຮຢາ-
ກິມ ກະສັດແຫ່ງ ຢູດາ ເປັນແຫວນປະທັບຢູ່ທີ່ມືຂວາຂອງເຮົາ ເຖິງປານນັ້ນເຮົາຈະຖອດອອກ
ເສຍ 25ແລະມອບເຈົ້າໄວ້ໃນມືຂອງຄົນເຫລົ່ານັ້ນທີ່ສະແຫວງຫາຊີວິດຂອງເຈົ້າ ໃນມືຂອງຄົນ

ເຫລົ່ານັ້ນຊຶ່ງພວກເຈົ້າຢ້ານໜ້າຕາຂອງພວກເຂົາ ຄືໃນມືຂອງ ເນບູກາດເນັດຊາ ກະສັດແຫ່ງ
ບາບີໂລນ ແລະໃນມືຂອງຄົນບາບີໂລນ [26]ເຮົາຈະໂຍນເຈົ້າ ແລະແມ່ຜູ້ເກີດເຈົ້າໄປຍັງອີກປະ-
ເທດໜຶ່ງ ຊຶ່ງເຈົ້າບໍ່ໄດ້ເກີດບ່ອນນັ້ນ ແລະເຈົ້າຈະຕາຍບ່ອນນັ້ນ [27]ແຕ່ແຜ່ນດິນທີ່ເຂົາອາໄລ
ຢາກຈະກັບນັ້ນ ພວກເຂົາຈະບໍ່ໄດ້ກັບໄປສູ່ໄດ້”
[28]ໂກນີຢາຊາຍຜູ້ນີ້ເປັນຮູບເຄົາລົບທີ່ຖືກໝິ່ນປະໝາດ ແລະແຕກຫລື ເປັນພາຊະນະທີ່ບໍ່ມີໃຜ
ມັກບໍ ເປັນຫຍັງຕົວລາວ ແລະເຊື້ອສາຍຂອງລາວຈຶ່ງຖືກໂຍນ ແລະຖືກໂຍນເຂົ້າໃນແຜ່ນດິນ
ຊຶ່ງພວກເຂົາທັງຫລາຍບໍ່ຮູ້ຈັກ [29]ໂອ ແຜ່ນດິນ ແຜ່ນດິນ ແຜ່ນດິນເອີຍ ຈົ່ງຟັງພຣະທຳຂອງ
ພຣະຜູ້ເປັນເຈົ້າ
[30]ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ “ຈົ່ງຂຽນລົງວ່າຊາຍຄົນນີ້ບໍ່ມີບຸດ ເປັນຊາຍຊຶ່ງບໍ່ຈະເລີນໃນ
ຊົ່ວຊີວິດຂອງລາວ ເພາະບໍ່ມີຄົນແຫ່ງເຊື້ອສາຍຂອງລາວຈັກຄົນໜຶ່ງທີ່ຈະຈະເລີນ ໃນການປະ-
ທັບເທິງພະທີ່ນັ່ງຂອງ ດາວິດ ແລະປົກຄອງໃນຢູດາອີກ”

# ບົດທີ 23

## ຄວາມຫວັງໃນອະນາຄົດ

[1]ພຣະຜູ້ເປັນເຈົ້າ ຈະຊົງພິພາກສາໂທດພວກຜູ້ປົກຄອງທັງຫລາຍຢ່າງຮ້າຍແຮງ ຍ້ອນວ່າ
ພວກເຂົາໄດ້ເຮັດໃຫ້ໄພ່ພົນຂອງພຣະອົງຖືກຂ້າ ແລະແຕກກະຈັດກະຈາຍໄປ. [2]ຕໍ່ໄປນີ້ ແມ່ນ
ຖ້ອຍຄຳທີ່ພຣະຜູ້ເປັນເຈົ້າຂອງຊາດອິສຣາເອນຊົງກ່າວເຖິງພວກຜູ້ປົກຄອງ ຄືຜູ້ລ້ຽງດູໄພ່ພົນ
ຂອງພຣະອົງວ່າ, “ພວກເຈົ້າໄດ້ເຮັດໃຫ້ໄພ່ພົນຂອງເຮົາແຕກກະຈັດກະຈາຍໄປ ໄດ້ຂັບໄລ່ໃຫ້
ພວກເຂົາໜີໄປ ບໍ່ໄດ້ລ້ຽງດູເຂົາ ບັດນີ້ ເຮົາຈະລົງໂທດເຈົ້າ ຍ້ອນວ່າເຈົ້າໄດ້ກະທຳການຊົ່ວ
ເຮົາ ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ແຫລະ. [3]ເຮົາຈະເຕົ້າໂຮມເອົາໄພ່ພົນຂອງເຮົາທີ່ຍັງເຫລືອຢູ່
ອອກມາຈາກປະເທດຕ່າງໆ ທີ່ເຮົາໄດ້ເຮັດໃຫ້ພວກເຂົາແຕກກະຈັດກະຈາຍໄປ ແລ້ວນຳກັບຄືນ
ມາບ້ານເມືອງຂອງເຂົາ ພວກເຂົາຈະມີລູກຫລານເພີ່ມທະວີຂຶ້ນຢ່າງຫລວງຫລາຍ. [4]ເຮົາຈະໃຫ້ມີ
ຜູ້ປົກຄອງຊຶ່ງຈະເບິ່ງແຍງພວກເຂົາ ພວກເຂົາຈະບໍ່ຢ້ານ ຫລືຕື່ນວຸ້ນວາຍອີກຕໍ່ໄປ ຈະບໍ່ມີໃຜຈັກ
ຄົນສູນຫາຍໄປ ເຮົາ ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ແຫລະ.”
[5]ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ວັນເວລານັ້ນຈະມາເຖິງແນ່ນອນ ໃນເວລານັ້ນ ເຮົາຈະເລືອກ
ເອົາຄົນໜຶ່ງຈາກເຊື້ອສາຍຂອງ ດາວິດ ມາເປັນກະສັດຜູ້ຊອບທຳ ກະສັດອົງນີ້ຈະປົກຄອງຢ່າງ
ສະຫລາດຫລັກແຫລມ ຈະເຮັດແຕ່ສິ່ງທີ່ຊອບທຳ ແລະຍຸດຕິທຳຕໍ່ປະຊາຊົນທົ່ວປະເທດ. [6]ໃນ
ລະຫວ່າງກະສັດອົງນີ້ສະເຫວີຍລາດຢູ່ນັ້ນ ພວກເຂົາຈະເອີ້ນຊື່ກະສັດອົງນີ້ວ່າ ພຣະຜູ້ເປັນເຈົ້າ
ຜູ້ຊ່ອຍເຮົາໃຫ້ລອດພົ້ນ.”
[7]ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ເວລານັ້ນຈະມາເຖິງ ເມື່ອນັ້ນຄົນທັງຫລາຍຈະບໍ່ກ່າວສາບານ
ອີກຕໍ່ໄປວ່າ ແມ່ນພຣະເຈົ້າຜູ້ຊົງມີຊີວິດນຳພາປະຊາຊົນອິສຣາເອນອອກຈາກປະເທດເອຢິບ.
[8]ແຕ່ຈະກ່າວສາບານວ່າ ແມ່ນພຣະເຈົ້າຜູ້ຊົງມີຊີວິດ ນຳປະຊາຊົນອິສຣາເອນອອກຈາກປະ-
ເທດຝ່າຍເໜືອ ແລະອອກຈາກປະເທດທັງປວງ ທີ່ເຮົາໄດ້ໃຫ້ພວກເຂົາກະຈັດກະຈາຍໄປນັ້ນ

ແລ້ວພວກເຂົາຈະຢູ່ໃນປະເທດຂອງຕົນເອງ."

## ພຣະເຈົ້າຊົງພິພາກສາຜູ້ປະກາດພຣະທຳບໍ່ຈິງທັງຫລາຍ

[9]ກ່ຽວກັບເລື່ອງບັນດາຜູ້ປະກາດພຣະທຳມີຄື ໃຈຂອງຂ້ອຍເປັນທຸກຢູ່ພາຍໃນຂ້ອຍ ແລະກະ-
ດູກທັງໝົດຂອງຂ້ອຍກໍສັ່ນ ຂ້ອຍເປັນເໝືອນຄົນເມົາ ຂ້ອຍເປັນເໝືອນຄົນເມົາດ້ວຍເຫລົ້າອະ-
ງຸ່ນ ເນື່ອງດ້ວຍພຣະຜູ້ເປັນເຈົ້າ ແລະເນື່ອງດ້ວຍພຣະທຳແຫ່ງຄວາມບໍລິສຸດຂອງພຣະອົງ
[10]ເພາະວ່າ ແຜ່ນດິນນັ້ນເຕັມໄປດ້ວຍຄົນລ່ວງປະເວນີ ດ້ວຍເຫດຄຳສາບແຊ່ງແຜ່ນດິນນັ້ນກໍໄວ້
ທຸກ ແລະເດີ່ນຫຍ້າໃນຖິ່ນແຫ້ງແລ້ງກັນດານກໍແຫ້ງໄປ ການດຳເນີນຊີວິດຂອງພວກເຂົາທັງ-
ຫລາຍກໍຊົ່ວຊ້າ ແລະອຳນາດຂອງພວກເຂົາກໍບໍ່ເປັນທຳ [11]ພຣະຜູ້ເປັນເຈົ້າກ່າວວ່າ "ທັງຜູ້ປະ-
ກາດພຣະທຳ ແລະປະໂລຫິດກໍອະທຳ ເຖິງແມ່ນວ່າໃນພຣະນິເວດຂອງເຮົາ ເຮົາກໍໄດ້ເຫັນ
ຄວາມຊົ່ວຂອງເຂົາ [12]ເພາະສະນັ້ນ ຫົນທາງຂອງພວກເຂົາຈະເປັນເໝືອນທາງມື່ນໃນຄວາມມືດ
ແກ່ເຂົາ ພວກເຂົາຈະຖືກຂັບໄລ່ເຂົ້າໄປ ແລະລົ້ມລົງໃນນັ້ນ ເພາະເຮົາຈະນຳເຫດຮ້າຍມາເໜືອ
ພວກເຂົາໃນປີແຫ່ງການລົງໂທດ" ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ [13]"ເຮົາໄດ້ເຫັນຄວາມໂງ່
ຈ້າໃນບັນດາຜູ້ປະກາດພຣະທຳແຫ່ງຊາມາເຣຍ ພວກເຂົາໄດ້ຜູ້ປະກາດພຣະທຳໃນນາມຂອງ
ພະບາອານ ແລະໄດ້ເຮັດໃຫ້ອິສຣາເອນ ປະຊາຊົນຂອງເຮົາຫລົງໄປ [14]ແຕ່ໃນຜູ້ປະກາດ
ພຣະທຳແຫ່ງເຢຣູຊາເລັມ ເຮົາໄດ້ເຫັນສິ່ງອັນໜ້າຕື່ນຕົກໃຈ ພວກເຂົາລ່ວງປະເວນີ ແລະດຳ-
ເນີນຢູ່ໃນຄວາມຂີ້ຕົວະ ພວກເຂົາໃຫ້ກຳລັງແກ່ຜູ້ເຮັດຄວາມຊົ່ວ ຈຶ່ງບໍ່ມີຜູ້ໜຶ່ງຜູ້ໃດຫັນຈາກ
ຄວາມຊົ່ວຂອງຕົນ ພວກເຂົາທຸກຄົນກາຍເປັນເໝືອນເມືອງໂຊໂດມແກ່ເຮົາ ແລະຊາວເມືອງນັ້ນ
ກໍເໝືອນເມືອງໂກໂມຣາ" [15]ເພາະສະນັ້ນ ພຣະຜູ້ເປັນເຈົ້າຈອມໂຍທາຈຶ່ງກ່າວກ່ຽວກັບເລື່ອງຜູ້
ປະກາດພຣະທຳເຫລົ່ານັ້ນວ່າ "ເບິ່ງແມ ເຮົາຈະລ້ຽງພວກເຂົາດ້ວຍເຄືອເຂົາຮໍ ແລະໃຫ້ນ້ຳບີໝີ
ເຂົາດື່ມ ເພາະວ່າຄວາມອະທຳໄດ້ອອກໄປທົ່ວແຜ່ນດິນນີ້ຈາກຜູ້ປະກາດພຣະທຳແຫ່ງເຢຣູຊາ-
ເລັມ" [16]ພຣະຜູ້ເປັນເຈົ້າຈອມໂຍທາກ່າວດັ່ງນີ້ວ່າ "ຢ່າຟັງຖ້ອຍຄຳຂອງຜູ້ປະກາດພຣະທຳ
ພວກເຂົາເຮັດໃຫ້ທ່ານບໍ່ມີສາລະ ພວກເຂົາກ່າວເຖິງນິມິດແຫ່ງໃຈຂອງຕົນເອງ ບໍ່ແມ່ນຈາກ
ພຣະໂອດຂອງພຣະຜູ້ເປັນເຈົ້າ [17]ພວກເຂົາຍັງເວົ້າກັບຄົນທີ່ໝິ່ນປະໝາດເຮົາວ່າ 'ພຣະຜູ້ເປັນ-
ເຈົ້າໄດ້ກ່າວວ່າ ທ່ານຈະສຸກສະບາຍ' ແລະແກ່ທຸກຄົນທີ່ດຳເນີນຕາມຄວາມດື້ດ້ານແຫ່ງຈິດໃຈ
ຂອງຕົນເອງ ພວກເຂົາກ່າວວ່າ 'ຈະບໍ່ມີເຫດຮ້າຍມາເໜືອເຈົ້າ'" [18]ເພາະວ່າຜູ້ໃດບໍທີ່ໄດ້ຢືນຢູ່ໃນ
ຄຳຕັກເຕືອນຂອງພຣະຜູ້ເປັນເຈົ້າ ທີ່ຈະພິຈາລະນາເຫັນ ແລະຟັງພຣະທຳຂອງພຣະອົງ ຫລືຜູ້
ໃດທີ່ເຊື່ອຟັງພຣະທຳຂອງພຣະອົງແລະຄອຍຟັງ [19]ເບິ່ງແມ ນັ້ນລົມບ້າໝູຂອງພຣະຜູ້ເປັນເຈົ້າ
ໄດ້ອອກໄປແລ້ວດ້ວຍພຣະພິໂລດ ເປັນລົມບ້າໝູຢ່າງຮຸນແຮງ ມັນຈະຕົກໜັກເທິງຫົວຂອງຄົນ
ຊົ່ວ [20]ຄວາມໂກດຮ້າຍຂອງພຣະຜູ້ເປັນເຈົ້າຈະບໍ່ຖອຍຫລັງກັບ ຈະໜັກກວ່າເກົ່າ ພຣະອົງຈະ
ຊົງເຮັດໃຫ້ສຳເລັດ ແລະຈະໜັກໜ່ວງ ພຣະອົງຊົງກະທຳຕາມພຣະເຈດຕະນາແຫ່ງພຣະໄທ
ຂອງພຣະອົງ ໃນພາຍຫລັງ ເຈົ້າທັງຫລາຍຈະເຂົ້າໃຈເລື່ອງນີ້ຢ່າງແຈ່ມແຈ້ງ [21]"ເຮົາບໍ່ໄດ້ໃຊ້ຜູ້
ປະກາດພຣະທຳເຫລົ່ານັ້ນ ແຕ່ພວກເຂົາຍັງແລ່ນໄປ ເຮົາບໍ່ໄດ້ເວົ້າກັບພວກເຂົາ ແຕ່ພວກເຂົາ
ຍັງເປັນຜູ້ປະກາດພຣະທຳ [22]ແຕ່ຖ້າພວກເຂົາໄດ້ຢືນຢູ່ໃນຄຳຕັກເຕືອນຂອງເຮົາ ແລ້ວເຂົາຈະ

ໄດ້ເວົ້າເຖິງຖ້ອຍຄຳຂອງເຮົາຕໍ່ປະຊາຊົນຂອງເຮົາ ແລະຈະໄດ້ໃຫ້ປະຊາຊົນຖອຍຫລັງກັບຈາກ
ທາງຊົ່ວຂອງຕົນແລ້ວ ແລະຖອຍຫລັງກັບຈາກຄວາມຊົ່ວຮ້າຍໃນການກະທຳຂອງພວກເຂົາ”
23ພຣະຜູ້ເປັນເຈົ້າກ່າວວ່າ “ເຮົາເປັນພຣະເຈົ້າຜູ້ສະຖິດຢູ່ໃກ້ໆ ບໍ່ແມ່ນພຣະເຈົ້າທີ່ຢູ່ໄກດ້ວຍບໍ”
24ພຣະຜູ້ເປັນເຈົ້າກ່າວວ່າ “ຄົນໃດຈະເຊື່ອງຕົນໄປຢູ່ໃນຝົນ ເພື່ອເຮົາຈະບໍ່ໄດ້ເຫັນລາວໄດ້ບໍ”
ພຣະຜູ້ເປັນເຈົ້າກ່າວວ່າ “ເຮົາບໍ່ໄດ້ຢູ່ເຕັມຟ້າສະຫວັນ ແລະໂລກນີ້ບໍ

25ເຮົາໄດ້ຍິນຜູ້ປະກາດພຣະທຳ ຜູ້ຊຶ່ງປະກາດພຣະທຳເລື່ອງບໍ່ຈິງໃນນາມຂອງເຮົາ ໄດ້ກ່າວ
ແລ້ວວ່າ ‘ຂ້າພະເຈົ້າຝັນໄປ ຂ້າພະເຈົ້າຝັນໄປ’ 26ອີກດົນເທົ່າໃດທີ່ຄຳຂີ້ຕົວະຈະຢູ່ໃນໃຈຂອງຜູ້
ປະກາດພຣະທຳ ຊຶ່ງປະກາດພຣະທຳເລື່ອງບໍ່ຈິງ ແລະຜູ້ປະກາດພຣະທຳຕາມການຫລອກລວງ
ແຫ່ງຈິດໃຈຂອງຕົນເອງ 27ຜູ້ຊຶ່ງຄິດວ່າຈະເຮັດໃຫ້ປະຊາຊົນຂອງເຮົາລືມນາມຂອງເຮົາໂດຍ
ຄວາມຝັນຂອງພວກເຂົາ ຊຶ່ງບອກສູ່ກັນແລະກັນຟັງ ເໝືອນກັບບັນພະບູລຸດຂອງພວກເຂົາລືມ
ນາມຂອງເຮົາໄປຕິດຕາມພະບາອານ 28ຈົ່ງໃຫ້ຜູ້ປະກາດພຣະທຳທີ່ໄດ້ຝັນກ່າວວ່າເປັນຄວາມ
ຝັນເທົ່ານັ້ນ ແຕ່ໃຫ້ຄົນທີ່ມີຖ້ອຍຄຳຂອງເຮົາກ່າວຖ້ອຍຄຳຂອງເຮົາຢ່າງສັດຊື່” ພຣະຜູ້ເປັນເຈົ້າ
ກ່າວວ່າ “ເຟືອງເຂົ້າມີຫຍັງແດ່ທີ່ເໝືອນຮວງເຂົ້າ” 29ພຣະຜູ້ເປັນເຈົ້າກ່າວວ່າ “ຖ້ອຍຄຳຂອງ
ເຮົາບໍ່ເໝືອນໄຟບໍ ຫລືເໝືອນຄ້ອນທີ່ຕີຫີນໃຫ້ແຕກເປັນຝຸ່ນ” 30ພຣະຜູ້ເປັນເຈົ້າກ່າວວ່າ
“ເພາະສະນັ້ນ ເບິ່ງແມ ເຮົາຕໍ່ສູ້ກັບບັນດາຜູ້ປະກາດພຣະທຳ ຜູ້ລັກຖ້ອຍຄຳຂອງເຮົາຈາກກັນ
ແລະກັນ” 31ພຣະຜູ້ເປັນເຈົ້າກ່າວວ່າ “ເບິ່ງແມ ເຮົາຕໍ່ສູ້ກັບບັນດາຜູ້ປະກາດພຣະທຳ ຜູ້ໃຊ້ລີ້ນ
ຂອງຕົນກ່າວວ່າ ‘ພຣະເຈົ້າກ່າວວ່າ’” 32ພຣະຜູ້ເປັນເຈົ້າກ່າວວ່າ “ເບິ່ງແມ ເຮົາຕໍ່ສູ້ຄົນເຫລົ່າ-
ນັ້ນທີ່ປະກາດພຣະທຳອັນເປັນຄວາມຝັນບໍ່ຈິງ ແລະຜູ້ຊຶ່ງບອກ ແລະນຳປະຊາຊົນຂອງເຮົາໃຫ້
ຫລົງໄປໂດຍຄຳຂີ້ຕົວະ ແລະຄຳໂອ້ອວດຂອງຕົນ ເມື່ອເຮົາບໍ່ໄດ້ໃຊ້ເຂົາຫລືສັ່ງເຂົາ ເພາະສະ-
ນັ້ນ ພວກເຂົາຈຶ່ງບໍ່ເປັນປະໂຫຍດແກ່ຊົນຊາດນີ້ຢ່າງໃດເລີຍ” ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ

33“ເມື່ອມີປະຊາຊົນຄົນໜຶ່ງຄົນໃດ ຫລືຜູ້ປະກາດພຣະທຳຄົນໃດ ຫລືປະໂລຫິດຄົນໃດຖາມ
ເຈົ້າວ່າ ‘ແມ່ນຫຍັງຄືພາລະຂອງພຣະຜູ້ເປັນເຈົ້າ’ ເຈົ້າຈົ່ງຕອບລາວວ່າ ‘ພຣະຜູ້ເປັນເຈົ້າກ່າວ
ວ່າ ພາລະຂອງເຮົາກໍຄືຈະໂຍນເຈົ້າໄປເສຍ’ 34ແລະສ່ວນຜູ້ປະກາດພຣະທຳ ປະໂລຫິດຫລືປະ-
ຊາຊົນຜູ້ໜຶ່ງຜູ້ໃດຊຶ່ງເວົ້າວ່າ ‘ພາລະຂອງພຣະຜູ້ເປັນເຈົ້າ’ ເຮົາຈະລົງໂທດຜູ້ນັ້ນ ແລະຄົວ
ເຮືອນຂອງລາວ

35ເຈົ້າທັງຫລາຍຈົ່ງເວົ້າດັ່ງນີ້ ຄືທຸກຄົນເວົ້າກັບເພື່ອນບ້ານຂອງຕົນ ແລະທຸກຄົນເວົ້າກັບພີ່-
ນ້ອງຂອງຕົນວ່າ ‘ພຣະຜູ້ເປັນເຈົ້າຕອບວ່າອັນໃດ’ ຫລື ‘ພຣະຜູ້ເປັນເຈົ້າຊົງອອກຄຳເວົ້າວ່າ
ອັນໃດ’ 36ແຕ່ເຈົ້າທັງຫລາຍຢ່າກ່າວວ່າ ‘ພາລະຂອງພຣະຜູ້ເປັນເຈົ້າ’ ອີກເລີຍ ເພາະວ່າພາລະ
ນັ້ນເປັນຄຳຂອງແຕ່ລະຄົນ ດ້ວຍວ່າເຈົ້າໄດ້ບິດເບືອນພຣະທຳຂອງພຣະເຈົ້າຜູ້ຊົງພຣະຊົນຢູ່
ພຣະຜູ້ເປັນເຈົ້າຈອມໂຍທາພຣະເຈົ້າຂອງເຮົາ 37ເຈົ້າຈົ່ງກ່າວກັບຜູ້ປະກາດພຣະທຳດັ່ງນີ້ວ່າ
‘ພຣະຜູ້ເປັນເຈົ້າຊົງຕອບທ່ານວ່າແນວໃດ’ ຫລື ‘ພຣະຜູ້ເປັນເຈົ້າຊົງອອກຄຳເວົ້າວ່າອັນໃດ’
38ແຕ່ຖ້າເຈົ້າທັງຫລາຍເວົ້າວ່າ ‘ພາລະຂອງພຣະຜູ້ເປັນເຈົ້າ’” ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ
“ເພາະເຈົ້າທັງຫລາຍໄດ້ກ່າວຄຳເຫລົ່ານີ້ ວ່າ ‘ພາລະຂອງພຣະຜູ້ເປັນເຈົ້າ’ ເມື່ອເຮົາໃຊ້ໄປຫາ

ເຈົ້າທັງຫລາຍ ເຮົາວ່າ ເຈົ້າຢ່າເວົ້າວ່າ 'ພາລະຂອງພຣະຜູ້ເປັນເຈົ້າ' [39]ເພາະສະນັ້ນ ເບິ່ງແມ
ເຮົາຈະລືມເຈົ້າທັງຫລາຍເສຍ ແລະໂຍນເຈົ້າໄປຈາກໜ້າເຮົາ ທັງເຈົ້າແລະເມືອງຊຶ່ງເຮົາໄດ້ໃຫ້
ແກ່ເຈົ້າ ແລະແກ່ບັນພະບູລຸດຂອງເຈົ້າ [40]ແລະເຮົາຈະນຳຄວາມຖືກຕຳໜິເປັນນິດ ແລະຄວາມ
ອັບອາຍເນື່ອງນິດມາເໜືອເຈົ້າທັງຫລາຍ ຊຶ່ງຈະລືມບໍ່ໄດ້ເລີຍ"

# ບົດທີ 24

## ກະຕ່າສອງໜ່ວຍໃສ່ໝາກເດື່ອເທດ

[1]ຫລັງຈາກ ເນບູກາດເນັດຊາ ກະສັດແຫ່ງ ບາບີໂລນ ໄດ້ຈັບ ເຢໂຮຢາກີນ ລາຊະບຸດຂອງ ເຢ-
ໂຮຢາກີມ ກະສັດແຫ່ງຢູດາ ໄປເປັນຊະເລີຍເສຍຈາກ ເຢຣູຊາເລັມ ພ້ອມກັບເຈົ້ານາຍແຫ່ງຢູດາ
ທັງພວກຊ່າງໄມ້ ແລະຊ່າງເຫລັກ ແລະນຳພວກເຂົາມາຍັງກຸງ ບາບີໂລນ ແລ້ວ ພຣະຜູ້ເປັນເຈົ້າ
ກໍຊີ້ງສະແດງນິມິດແກ່ຂ້າພະເຈົ້າດັ່ງນີ້ ເບິ່ງແມ ມີກະຕ່າສອງໜ່ວຍໃສ່ໝາກເດື່ອເທດ ວາງໄວ້-
ໜ້າພຣະວິຫານຂອງ ພຣະຜູ້ເປັນເຈົ້າ [2]ກະຕ່າໜ່ວຍໜຶ່ງມີໝາກເດື່ອເທດຢ່າງດີ ເໝືອນກັບ
ໝາກເດື່ອເທດທີ່ສຸກຕົ້ນລະດູ ແຕ່ກະຕ່າອີກໜ່ວຍໜຶ່ງນັ້ນມີໝາກເດື່ອເທດທີ່ຂີ້ຮ້າຍ ເນົ່າຈົນຮັບ
ປະທານບໍ່ໄດ້ [3]ແລະ ພຣະຜູ້ເປັນເຈົ້າ ກ່າວແກ່ຂ້າພະເຈົ້າວ່າ "ເຢເຣມີຢາ ເອີຍ ເຈົ້າເຫັນຫຍັງ"
ຂ້າພະເຈົ້າທູນຕອບວ່າ "ເຫັນໝາກເດື່ອເທດທີ່ດີຫລາຍ ແລະທີ່ບໍ່ດີກໍຫລາຍ ເນົ່າຈົນຮັບປະທານ
ບໍ່ໄດ້ ພຣະເຈົ້າຂ້າ"

[4]ແລ້ວພຣະທຳຂອງ ພຣະຜູ້ເປັນເຈົ້າ ກໍມາເຖິງຂ້າພະເຈົ້າອີກວ່າ [5]"ພຣະຜູ້ເປັນເຈົ້າ ພຣະເຈົ້າ
ແຫ່ງ ອິສຣາເອນ ກ່າວດັ່ງນີ້ວ່າ ກໍເໝືອນກັບໝາກເດື່ອເທດທີ່ດີເຫລົ່ານີ້ແຫລະ ເຮົາຈະຖືວ່າ
ພວກເຫລົ່ານັ້ນທີ່ຖືກກວາດໄປຈາກຢູດາຍັງດີຢູ່ ຄືຜູ້ທີ່ເຮົາໄດ້ສົ່ງໄປຈາກສະຖານທີ່ນີ້ໄປສູ່ແຜ່ນ-
ດິນຂອງຊາວ ບາບີໂລນ [6]ເຮົາຈະຕັ້ງຕາຂອງເຮົາເບິ່ງພວກເຂົາ ເພື່ອຈະເຮັດຄວາມດີ ແລະເຮົາ
ຈະພາພວກເຂົາທັງຫລາຍກັບມາຍັງແຜ່ນດິນນີ້ອີກ ເຮົາຈະສ້າງພວກເຂົາຂຶ້ນ ແລະຈະບໍ່ຮື້ລົງ
ເຮົາຈະປູກຝັງພວກເຂົາແລະບໍ່ຖອນເຂົາ [7]ເຮົາຈະໃຫ້ຈິດໃຈແກ່ຜູ້ທີ່ຈະຮູ້ຈັກເຮົາວ່າ ເຮົາຄື ພຣະ-
ຜູ້ເປັນເຈົ້າ ແລະພວກເຂົາຈະເປັນປະຊາຊົນຂອງເຮົາ ແລະເຮົາຈະເປັນ ພຣະເຈົ້າ ຂອງເຂົາ
ເພາະພວກເຂົາຈະກັບມາຫາເຮົາດ້ວຍຄວາມເຕັມໃຈ"

[8]ແຕ່ ພຣະຜູ້ເປັນເຈົ້າ ກ່າວດັ່ງນີ້ວ່າ "ເໝືອນດັ່ງໝາກເດື່ອເທດທີ່ຂີ້ຮ້າຍ ຊຶ່ງເນົ່າຫລາຍຈົນຮັບ
ປະທານບໍ່ໄດ້ນັ້ນ ເຮົາຈະເຮັດຕໍ່ ເຊເດກີຢາ ກະສັດແຫ່ງຢູດາ ທັງເຈົ້ານາຍຂອງເພິ່ນ ແລະຊາວ
ເຢຣູຊາເລັມ ທີ່ເຫລືອຢູ່ ຜູ້ຊຶ່ງຍັງຄ້າງຢູ່ໃນແຜ່ນດິນນີ້ ແລະຜູ້ທີ່ຍັງອາໄສຢູ່ໃນປະເທດ ເອຢິບ
[9]ເຮົາຈະມອບພວກເຂົາໄວ້ໃຫ້ຍ້າຍໄປຢູ່ໃນລາຊະອານາຈັກທັງໝົດໃນໂລກເພື່ອຄວາມທຸກຍາກ
ໃຫ້ເປັນທີ່ຖືກຕຳໜິ ເປັນຂີ້ປາກ ເປັນຄຳເຍາະເຍີ້ຍ ແລະເປັນຄຳສາບແຊ່ງ ທົ່ວໄປທຸກແຫ່ງຊຶ່ງ
ເຮົາຂັບໄລ່ພວກເຂົາໃຫ້ໄປຢູ່ [10]ເຮົາຈະສົ່ງດາບ ແລະການອຶດຫິວອາຫານ ແລະພະຍາດລະ-
ບາດມາທ່າມກາງພວກເຂົາ ຈົນພວກເຂົາຈະຖືກທຳລາຍຢ່າງສິ້ນເຊີງຈາກແຜ່ນດິນຊຶ່ງເຮົາໄດ້ໃຫ້
ແກ່ພວກເຂົາ ແລະແກ່ບັນພະບູລຸດຂອງເຂົາ"

# ບົດທີ 25

## ແຜ່ນດິນອິສຣາເອນຈະຖືກຖິ້ມຮ້າງເປັນເວລາເຈັດສິບປີ

1ພຣະທຳຊຶ່ງມາເຖິງ ເຢເຣມີຢາ ກ່ຽວກັບ ເລື່ອງຊົນຊາດ ຢູດາ ທັງໝົດ ໃນປີທີ່ສີ່ແຫ່ງລາຊະ-
ການ ເຢໂຮຢາກິມ ລາຊະບຸດຂອງ ໂຢສີຢາ ກະສັດແຫ່ງ ຢູດາ ປີນັ້ນເປັນຕົ້ນປີລາຊະການຂອງ
ເນບູກາດເນັດຊາ ກະສັດຂອງກຸງ ບາບີໂລນ 2ຊຶ່ງ ເຢເຣມີຢາ ຜູ້ປະກາດພຣະທຳໄດ້ກ່າວແກ່ປະ-
ຊາຊົນ ຢູດາ ແລະແກ່ຊາວ ເຢຣູຊາເລັມ ທັງໝົດ ວ່າ 3"ຕັ້ງແຕ່ປີທີ່ສິບສາມຂອງ ໂຢສີຢາ ລາ-
ຊະບຸດຂອງ ອາໂມນ ກະສັດແຫ່ງ ຢູດາ ຈົນເຖິງວັນນີ້ເປັນເວລາຊາວສາມປີ ພຣະທຳຂອງ ພຣະ-
ຜູ້ເປັນເຈົ້າ ມາຍັງຂ້າພະເຈົ້າ ແລະຂ້າພະເຈົ້າກໍໄດ້ບອກແກ່ທ່ານທັງຫລາຍຢ່າງບໍ່ຢຸດຢັ້ງ ແຕ່
ທ່ານກໍບໍ່ໄດ້ຍອມຟັງ 4ທ່ານບໍ່ຟັງ ຫລືຫງ່ຽງຫູຂອງທ່ານຟັງ ເຖິງແມ່ນວ່າ ພຣະຜູ້ເປັນເຈົ້າ ຊົງສົ່ງ
ບັນດາຜູ້ປະກາດພຣະທຳ ຜູ້ຮັບໃຊ້ຂອງພຣະອົງມາຢ່າງບໍ່ຂາດສາຍກໍຕາມ 5ກ່າວວ່າ 'ບັດນີ້ເຈົ້າ
ທຸກຄົນຈົ່ງຖອຍຫລັງກັບຈາກທາງຊົ່ວຂອງຕົນ ແລະຈາກການເຮັດຜິດຂອງຕົນ ແລະອາໄສຢູ່
ໃນ ແຜ່ນດິນ ຊຶ່ງ ພຣະຜູ້ເປັນເຈົ້າ ຊົງປະທານ ແກ່ ເຈົ້າ ແລະບັນພະບູລຸດຂອງ ເຈົ້າຕໍ່ໄປ ເປັນນິດ
6ຢ່າໄປຕິດສອຍຫ້ອຍຕາມພະອື່ນ ເພື່ອຈະບົວລະບັດແລະນະມັດສະການພະເຫລົ່ານັ້ນ ຫລືຍົວະ
ເຍົ້າເຮົາໃຫ້ຮ້າຍດ້ວຍຜົນງານແຫ່ງມືຂອງເຈົ້າ ແລ້ວເຮົາຈະບໍ່ເຮັດອັນຕະລາຍແກ່ເຈົ້າ' 7ພຣະຜູ້-
ເປັນເຈົ້າກ່າວວ່າ 'ເຖິງຢ່າງນັ້ນ ເຈົ້າທັງຫລາຍກໍບໍ່ຟັງເຮົາ ເພື່ອເຈົ້າຈະໄດ້ຍົວະເຍົ້າເຮົາໃຫ້ໂກດ
ຮ້າຍດ້ວຍຜົນງານແຫ່ງມືຂອງເຈົ້າ ຊຶ່ງເປັນຜົນຮ້າຍແກ່ເຈົ້າເອງ'

8ເພາະສະນັ້ນ ພຣະຜູ້ເປັນເຈົ້າ ຈອມໂຍທາຈຶ່ງກ່າວດັ່ງນີ້ວ່າ 'ເພາະເຈົ້າບໍ່ຟັງຖ້ອຍຄຳຂອງ
ເຮົາ' 9ພຣະຜູ້ເປັນເຈົ້າກ່າວວ່າ 'ເບິ່ງແມ ເຮົາຈະເອີ້ນຄອບຄົວທັງໝົດຂອງທິດເໜືອ ແລະ ເນ-
ບູກາດເນັດຊາ ກະສັດ ບາບີໂລນ ຜູ້ຮັບໃຊ້ຂອງເຮົາ ແລະເຮົາຈະນຳພວກເຂົາມາຕໍ່ສູ້ແຜ່ນດິນນີ້
ຊາວເມືອງນີ້ ແລະບັນດາປະຊາຊາດທີ່ຢູ່ອ້ອມຮອບ ເຮົາຈະທຳລາຍພວກເຂົາໃຫ້ໝົດສິ້ນ ແລະ
ຈະ ເຮັດໃຫ້ພວກເຂົາເປັນທີ່ໜ້າປະຫລາດໃຈ ເປັນທີ່ເຍາະເຍີ້ຍ ແລະເປັນທີ່ຮົກຮ້າງເປັນນິດ
10ຍິ່ງກວ່ານັ້ນອີກ ເຮົາຈະກຳຈັດສຽງບັນເທີງ ແລະສຽງຊື່ນບານ ສຽງເຈົ້າບ່າວ ແລະສຽງເຈົ້າ
ສາວ ສຽງຫີນໂມ້ ແລະແສງຕະກຽງຈາກເຈົ້າ 11ແຜ່ນດິນທັງໝົດນີ້ຈະເປັນທີ່ຮ້າງເປົ່າ ແລະທີ່
ໜ້າປະຫລາດໃຈ ບັນດາປະຊາຊາດເຫລົ່ານີ້ຈະບົວລະບັດກະສັດກຸງ ບາບີໂລນ ຢູ່ເຈັດສິບປີ'

12ພຣະຜູ້ເປັນເຈົ້າກ່າວວ່າ 'ຕໍ່ມາເມື່ອຄົບເຈັດສິບປີແລ້ວ ເຮົາຈະລົງໂທດກະສັດ ບາບີໂລນ
ແລະປະຊາຊົນຊາດນັ້ນ ຄືແຜ່ນດິນຂອງຊາວ ບາບີໂລນ ເພາະຄວາມຊົ່ວຊ້າຂອງພວກເຂົາ
ເຮັດໃຫ້ແຜ່ນດິນນັ້ນຖິ້ມຮ້າງຢູ່ເປັນນິດ 13ເຮົາຈະນຳຖ້ອຍຄຳທັງໝົດໃຫ້ສຳເລັດທີ່ແຜ່ນດິນນັ້ນ
ຄືຖ້ອຍຄຳທີ່ເຮົາໄດ້ກ່າວຕໍ່ສູ້ເມືອງນັ້ນ ຄືທຸກສິ່ງທີ່ຂຽນໄວ້ໃນໜັງສືນີ້ ຊຶ່ງ ເຢເຣມີຢາ ໄດ້ທຳນວຍ
ແກ່ບັນດາປະຊາຊາດທັງໝົດ 14ເພາະວ່າຈະມີຫລາຍປະຊາຊາດ ແລະບັນດາມະຫາກະສັດເຮັດ
ໃຫ້ພວກເຂົາເຫລົ່ານັ້ນເປັນຂ້າທາດ ເຖິງແມ່ນວ່າພວກເຂົາກໍດີ ເຮົາຈະຕອບແທນພວກເຂົາຕາມ
ການກະທຳ ແລະຜົນງານແຫ່ງມືຂອງຕົນ'"

## ຖ້ວຍນ້ຳອະງຸ່ນແຫ່ງພຣະພິໂລດສຳລັບບັນດາປະຊາຊາດ

15ພຣະຜູ້ເປັນເຈົ້າ ພຣະເຈົ້າ ແຫ່ງ ອິສຣາເອນ ກ່າວກັບຂ້າພະເຈົ້າດັ່ງນີ້ວ່າ "ຈົ່ງ ເອົາຖ້ວຍນ້ຳ

ອະງຸ່ນແຫ່ງພຣະພິໂລດນີ້ໄປຈາກມືເຮົາ ແລະບັງຄັບບັນດາປະຊາຊາດຊຶ່ງເຮົາສົ່ງເຈົ້າໄປນັ້ນໃຫ້
ດື່ມຈາກຖ້ວຍນັ້ນ 16ພວກເຂົາຈະດື່ມ ແລະຍ່າງໂຊເຊ ທັງບ້າຄັ່ງໄປເນື່ອງດ້ວຍດາບຊຶ່ງເຮົາຈະ
ສົ່ງໄປທ່າມກາງພວກເຂົາ”

17ດັ່ງນັ້ນ ຂ້າພະເຈົ້າຈຶ່ງຮັບຖ້ວຍມາຈາກພຣະຫັດຂອງພຣະຜູ້ເປັນເຈົ້າ ແລະບັງຄັບປະຊາ-
ຊາດທັງໝົດ ຊຶ່ງພຣະຜູ້ເປັນເຈົ້າຊົງໃຊ້ໃຫ້ຂ້າພະເຈົ້າໄປຫານັ້ນດື່ມ 18ຄືກຸງເຢຣູຊາເລັມ ແລະ
ຫົວເມືອງແຫ່ງຢູດາ ທັງບັນດາກະສັດ ແລະເຈົ້ານາຍຂອງເມືອງນັ້ນ ເຮັດໃຫ້ເປັນທີ່ຮົກຮ້າງ
ແລະທີ່ໜ້າປະຫລາດໃຈ ເປັນທີ່ເຍາະເຍີ້ຍ ແລະເປັນທີ່ສາບແຊ່ງເໝືອນທຸກມື້ນີ້ 19ຟາຣາໂອ
ກະສັດແຫ່ງເອຢິບກັບບັນດາຂ້າລາຊະການເຈົ້ານາຍ ແລະປະຊາຊົນຂອງເພິ່ນນັ້ນ 20ແລະບັນ-
ດາຊົນຕ່າງດ້າວທີ່ຢູ່ທ່າມກາງພວກເຂົາ ບັນດາກະສັດແຫ່ງແຜ່ນດິນອູເຊ ແລະບັນດາກະສັດ
ແຫ່ງແຜ່ນດິນຟີລິດສະຕິນ ເມືອງອາຊະກາໂລນ ຄາຊາ ເອັກໂຣນ ແລະສ່ວນຊາວເມືອງອາ-
ຊະໂດດທີ່ເຫລືອຢູ່ 21ເອໂດມ ໂມອາບ ແລະຄົນອຳໂມນ 22ບັນດາກະສັດແຫ່ງເມືອງຕີເຣ
ບັນດາກະສັດເມືອງຊີໂດນ ແລະບັນດາກະສັດແຫ່ງເກາະຕ່າງໆຟາກທະເລເບື້ອງນັ້ນ 23ເມືອງ
ເດດານ ເຕມາ ບູເຊ ແລະບັນດາຄົນທີ່ຢູ່ໃນມຸມທີ່ໄກທີ່ສຸດ 24ບັນດາກະສັດແຫ່ງອາຫລັບ
ແລະບັນດາກະສັດແຫ່ງປະຊາຊົນທີ່ປະປົນກັນຢູ່ໃນຖິ່ນແຫ້ງແລ້ງກັນດານ 25ບັນດາກະສັດແຫ່ງ
ຊິມຣີ ແລະບັນດາກະສັດແຫ່ງເອລາມ ແລະບັນດາກະສັດຂອງເມເດຍ 26ບັນດາກະສັດແຫ່ງ
ເມືອງທິດເໜືອ ທັງໄກ ແລະໃກ້ ເທື່ອລະເມືອງໆ ແລະບັນດາລາຊະອານາຈັກແຫ່ງໂລກຊຶ່ງຢູ່
ເທິງພື້ນໂລກ ແລະກະສັດແຫ່ງເຊຊັກ ຈະດື່ມພາຍຫລັງກະສັດເຫລົ່ານີ້

27“ແລ້ວເຈົ້າຈົ່ງເວົ້າກັບພວກເຂົາວ່າ ‘ພຣະຜູ້ເປັນເຈົ້າຈອມໂຍທາ ພຣະເຈົ້າແຫ່ງອິສຣາເອນ
ກ່າວດັ່ງນີ້ວ່າ ຈົ່ງດື່ມໃຫ້ເມົາແລ້ວຮາກອອກ ຈົ່ງລົ້ມລົງ ແລະຢ່າລຸກຂຶ້ນອີກເລີຍ ເນື່ອງດ້ວຍ
ດາບຊຶ່ງເຮົາຈະສົ່ງມາທ່າມກາງເຈົ້າທັງຫລາຍ’ 28ແລະຖ້າພວກເຂົາປະຕິເສດບໍ່ຮັບຖ້ວຍຈາກມື
ຂອງເຈົ້າດື່ມ ເຈົ້າຈົ່ງເວົ້າກັບພວກເຂົາວ່າ ‘ພຣະຜູ້ເປັນເຈົ້າຈອມໂຍທາກ່າວດັ່ງນີ້ວ່າ ເຈົ້າຈະ
ຕ້ອງດື່ມ 29ເພາະ ເບິ່ງແມ ເຮົາໄດ້ເລີ່ມລົງໂທດເມືອງຊຶ່ງເອີ້ນຕາມນາມຂອງເຮົາແລ້ວ ແລະເຈົ້າ
ຈະລອຍນວນໄປໄດ້ໂດຍບໍ່ຖືກໂທດບໍ ພຣະຜູ້ເປັນເຈົ້າຈອມໂຍທາກ່າວວ່າ ເຈົ້າຈະລອຍນວນ
ໄປບໍ່ໄດ້ ເພາະເຮົາຈະເອີ້ນດາບເຫລັ້ມໜຶ່ງມາເໜືອຊາວແຜ່ນດິນໂລກທັງໝົດ’

30ເພາະສະນັ້ນ ເຈົ້າຈົ່ງປະກາດພຣະຄຳເຫລົ່ານີ້ທັງໝົດສູ້ພວກເຂົາ ແລະກ່າວແກ່ເຂົາວ່າ
‘ພຣະຜູ້ເປັນເຈົ້າຈະຊົງເປັ່ງສຽງຄຳລາມຈາກທີ່ສູງ ແລະຈາກທີ່ປະທັບອັນບໍລິສຸດຂອງພຣະອົງ
ພຣະອົງຈະເປັ່ງພຣະສຸລະສຽງ ພຣະອົງຈະເປັ່ງສຽງຄຳລາມຕໍ່ຄອກແກະຂອງພຣະອົງ ແລະຊົງ
ໂຫ່ຮ້ອງເໝືອນກັບຄົນທີ່ຢຽບອະງຸ່ນໂຫ່ຮ້ອງຕໍ່ຊາວໂລກທັງໝົດ 31ສຽງກ້ອງກັງວານຈະກ້ອງໄປ
ທົ່ວປາຍໂລກ ເພາະພຣະຜູ້ເປັນເຈົ້າຊົງມີຄະດີກັບບັນດາປະຊາຊາດ ພຣະອົງຈະຊົງເຂົ້າພິ-
ພາກສາເນື້ອໜັງທັງໝົດ ສ່ວນຄົນຊົ່ວນັ້ນ ພຣະອົງຈະຊົງຟັນເສຍດ້ວຍດາບ’ ພຣະຜູ້ເປັນເຈົ້າ
ກ່າວດັ່ງນີ້ແຫລະ 32ພຣະຜູ້ເປັນເຈົ້າຈອມໂຍທາກ່າວດັ່ງນີ້ວ່າ ‘ເບິ່ງແມ ຄວາມຮ້າຍຈະໄປຈາກ
ປະຊາຊາດນີ້ເຖິງປະຊາຊາດນັ້ນ ແລະລົມບ້າໝູໃຫຍ່ຈະປັ່ນປ່ວນຂຶ້ນມາ ຈາກສ່ວນໂລກທີ່ໄກທີ່
ສຸດ 33ແລະບັນດາຜູ້ທີ່ພຣະຜູ້ເປັນເຈົ້າຊົງປະຫານໃນມື້ນັ້ນ ຈະມາຈາກປາຍໂລກເບື້ອງນີ້ເຖິງ

ປາຍໂລກເບື້ອງນັ້ນ ພວກເຂົາເຫລົ່ານັ້ນຈະບໍ່ມີໃຜຄວນຄາງໃຫ້ ຫລືຮວບຮວມ ຫລືຝັງໄວ້ ແຕ່
ຈະເປັນຂີ້ສັດຢູ່ເທິງພື້ນດິນ'" [34]ຜູ້ລ້ຽງແກະທັງຫລາຍເອີຍ ຈົ່ງຮ້ອງຄາງ ແລະຮ້ອງເຖິດ ເຈົ້າ
ຂອງຝູງແກະ ຈົ່ງກິ້ງເກືອກໃນຂີ້ເຖົ່າ ເພາະວັນເວລາຂອງການສັງຫານເຈົ້າ ແລະທີ່ເຈົ້າຕ້ອງ
ກະຈັດກະຈາຍມາເຖິງແລ້ວ ແລະເຈົ້າທັງຫລາຍຈະລົ້ມລົງເໝືອນຢ່າງແກະຜູ້ໂຕງາມ [35]ຜູ້ລ້ຽງ
ແກະຈະບໍ່ມີທາງໜີ ຫລືເຈົ້າຂອງຝູງແກະບໍ່ມີທາງລອດພົ້ນໜີໄປ [36]ຈະໄດ້ຟັງສຽງຮ້ອງຂອງຜູ້
ລ້ຽງແກະ ແລະສຽງຮ້ອງຄາງຂອງເຈົ້າຂອງຝູງແກະ ເພາະວ່າພຣະຜູ້ເປັນເຈົ້າຊົງທຳລາຍເດີ່ນ
ຫຍ້າຂອງພວກເຂົາເສຍແລ້ວ [37]ແລະຄອກແກະທີ່ສະຫງົບສຸກກໍຖືກເຮັດໃຫ້ລົ້ມລົງເສຍແລ້ວ
ເນື່ອງດ້ວຍຄວາມໂກດຮ້າຍອັນແຮງກ້າຂອງພຣະຜູ້ເປັນເຈົ້າ [38]ພຣະອົງຊົງອອກຈາກບ່ອນຊຸ້ມ
ຂອງພຣະອົງເໝືອນໂຕສິງ ເພາະວ່າແຜ່ນດິນຂອງພວກເຂົາເປັນທີ່ຮົກຮ້າງ ເນື່ອງດ້ວຍພຣະພິ-
ໂລດຂອງພຣະຜູ້ບີບບັງຄັບ ແລະເນື່ອງດ້ວຍຄວາມໂກດຮ້າຍອັນແຮງກ້າຂອງພຣະອົງ

# ບົດທີ 26

## ເຢເຣມີຢາຖືກຟ້ອງຮ້ອງ

[1]ພາຍຫລັງ ເຢໂຮຢາກິມ ພະລາຊະໂອລົດຂອງ ໂຢສີຢາ ໄດ້ເປັນກະສັດຢູດາບໍ່ເທິງ. [2]ພຣະຜູ້-
ເປັນເຈົ້າ ໄດ້ຊົງບອກ ເຢເຣມີຢາວ່າ, "ເຈົ້າຈົ່ງຢືນຂຶ້ນໃນເດີ່ນພຣະວິຫານ ແລ້ວປະກາດຄຳທັງ
ໝົດທີ່ເຮົາໄດ້ບອກເຈົ້າໃຫ້ຊາວຢູດາທີ່ມາອ້ອນວອນຢູ່ທີ່ນັ້ນຟັງ ຢ່າໄດ້ເວັ້ນຈັກຄຳດຽວ. [3]ເພາະ-
ວ່າບາງທີ່ພວກເຂົາອາດເຊື່ອຟັງ ແລະຕັດສິນໃຈເວັ້ນຈາກທາງຊົ່ວກໍໄດ້ ຖ້າພວກເຂົາເຮັດໄດ້
ດັ່ງນີ້ ເຮົາກໍຈະປ່ຽນຄວາມຕັ້ງໃຈບໍ່ນຳໄພພິບັດຍ້ອນການຊົ່ວນັ້ນມາຍັງພວກເຂົາ." [4]ພຣະຜູ້-
ເປັນເຈົ້າ ຊົງບອກ ເຢເຣມີຢາ ໃຫ້ເວົ້າຕໍ່ປະຊາຊົນວ່າ, "ເຮົາ ພຣະຜູ້ເປັນເຈົ້າ ໄດ້ກ່າວວ່າ ພວກ
ເຈົ້າຕ້ອງເຊື່ອຟັງເຮົາ ໂດຍເຮັດຕາມພຣະທຳຄຳສອນທີ່ເຮົາໄດ້ບອກແລ້ວ. [5]ຕ້ອງເອົາໃຈໃສ່ເຮັດ
ຕາມຖ້ອຍຄຳຂອງຜູ້ຮັບໃຊ້ເຮົາ ຄືພວກຜູ້ປະກາດພຣະທຳທີ່ເຮົາໃຊ້ມາຫາພວກເຈົ້ານັ້ນ ພວກ
ເຈົ້າບໍ່ເຄີຍຟັງຄວາມພວກເຂົາເລີຍ. [6]ຖ້າພວກເຈົ້າເຮັດຕາມຄຳສັ່ງເຫລົ່ານີ້ ເຮົາຈະເຮັດໃຫ້ວິ-
ຫານນີ້ເປັນເໝືອນເມືອງຊີໂລ ຊົນຊາດທັງປວງທົ່ວໂລກຈະໃຊ້ຊື່ເມືອງນີ້ເປັນຄຳສາບແຊ່ງ.

[7]ພວກປະໂລຫິດ ພວກຜູ້ປະກາດພຣະທຳ ແລະປະຊາຊົນທັງປວງໄດ້ຍິນ ເຢເຣມີຢາກ່າວ
ດັ່ງນີ້ໃນວິຫານ. [8]ເມື່ອ ເຢເຣມີຢາກ່າວຖ້ອຍຄຳທີ່ ພຣະຜູ້ເປັນເຈົ້າ ຊົງບອກສິ້ນສຸດລົງ ພວກປະ-
ໂລຫິດ ພວກຜູ້ປະກາດພຣະທຳ ແລະປະຊາຊົນກໍຈັບກຸມເອົາ ເຢເຣມີຢາ ພ້ອມທັງຮ້ອງໃສ່ວ່າ,
"ເຈົ້າຄວນຈະຕາຍຍ້ອນຄຳເວົ້າຂອງເຈົ້າ. [9]ເປັນຫຍັງເຈົ້າຈຶ່ງເວົ້າໃນນາມຂອງ ພຣະຜູ້ເປັນເຈົ້າ
ວ່າ ພຣະວິຫານນີ້ຈະເປັນເໝືອນເມືອງຊີໂລ ແລະວ່າເມືອງນີ້ຈະຖືກທຳລາຍ ຈະບໍ່ມີຄົນອາໄສຢູ່
ໃນເມືອງນີ້ເລີຍ" ແລ້ວຝູງຊົນໃນພຣະວິຫານໄດ້ເຂົ້າລ້ອມ ເຢເຣມີຢາ ໄວ້.

[10]ເມື່ອພວກເຈົ້ານາຍຂອງຊາວຢູດາ ໄດ້ຮູ້ເລື່ອງນີ້ ກໍພາກັນອອກຈາກພະລາຊະສຳນັກ ໄປ
ນັ່ງຢູ່ໃນທາງເຂົ້າປະຕູໃໝ່ຂອງພຣະວິຫານນັ້ນ. [11]ຂະນະນັ້ນ ປະໂລຫິດກັບພວກຜູ້ປະກາດ
ພຣະທຳໄດ້ເວົ້າຕໍ່ພວກເຈົ້ານາຍ ແລະປະຊາຊົນວ່າ, "ຄົນນີ້ສົມຄວນຈະໄດ້ຮັບໂທດເຖິງຕາຍ
ເພາະວ່າລາວໄດ້ເວົ້າໃສ່ຮ້າຍປ້າຍສີເມືອງນີ້ ດັ່ງທີ່ພວກທ່ານໄດ້ຍິນກັບຫູຕົນເອງແລ້ວ."

[12]ຕໍ່ມາ ເຢເຣມີຢາ ໄດ້ເວົ້າກັບພວກເຈົ້ານາຍ ແລະປະຊາຊົນວ່າ, "ພຣະຜູ້ເປັນເຈົ້າ ຊົງໃຊ້
ຂ້າພະເຈົ້າມາກ່າວຄຳທຳນວຍຕໍ່ສູ້ວິຫານ ແລະເມືອງນີ້ ຄືກ່າວບັນດາຖ້ອຍຄຳທີ່ພວກທ່ານໄດ້
ຍິນແລ້ວນັ້ນ. [13]ພວກທ່ານຕ້ອງປ່ຽນທາງດຳເນີນຊີວິດ ແລະການປະພຶດ ຈົ່ງເຊື່ອຟັງຖ້ອຍຄຳ
ແຫ່ງ ພຣະຜູ້ເປັນເຈົ້າ ຂອງທ່ານ ແລ້ວພຣະອົງຈະຊົງປ່ຽນພຣະໄທບໍ່ນຳເອົາໄພພິບັດທີ່ພຣະອົງ
ຊົງກ່າວນັ້ນມາໃສ່ພວກທ່ານ. [14]ສຳລັບຂ້າພະເຈົ້າຢູ່ໃນເງື້ອມມືຂອງພວກທ່ານແລ້ວ ຈົ່ງເຮັດກັບ
ຂ້າພະເຈົ້າຕາມທີ່ເຫັນດີ ແລະຖືກຕ້ອງເທີ້ນ. [15]ຖ້າວ່າທຳຮ້າຍຂ້າພະເຈົ້າເຖິງຕາຍ ແນ່ນອນ
ທ່ານກັບປະຊາຊົນໃນເມືອງນີ້ກໍຈະເປັນຜູ້ຂ້າຄົນທີ່ບໍ່ໄດ້ເຮັດຜິດ ເພາະວ່າແມ່ນ ພຣະຜູ້ເປັນເຈົ້າ
ແທ້ທີ່ຊົງໃຊ້ຂ້າພະເຈົ້າມາບອກຖ້ອຍຄຳທັງປວງນີ້ແກ່ພວກທ່ານ."

[16]ແລ້ວພວກເຈົ້ານາຍກັບປະຊາຊົນໄດ້ເວົ້າຕໍ່ພວກປະໂລຫິດ ແລະພວກຜູ້ປະກາດພຣະທຳ
ວ່າ, "ບໍ່ຄວນຈະລົງໂທດຄົນຜູ້ນີ້ເຖິງຕາຍ ເພາະວ່າທີ່ລາວເວົ້າຕໍ່ພວກເຮົານັ້ນ ກໍເວົ້າໃນພຣະ-
ນາມ ພຣະຜູ້ເປັນເຈົ້າ ຂອງເຮົາ." [17]ຫລັງຈາກນັ້ນ ມີຜູ້ອາວຸໂສບາງຄົນໄດ້ຢືນຂຶ້ນເວົ້າກັບປະຊາ-
ຊົນທີ່ຊຸມນຸມກັນຢູ່ວ່າ, [18]"ໃນຄາວ ເຮເຊກີຢາ ເປັນກະສັດ ຢູດາ ນັ້ນ ມີຜູ້ປະກາດພຣະທຳຊາວ
ໂມເຣເຊັດ ຜູ້ໜຶ່ງຊື່ ມີກາ ໄດ້ບອກປະຊາຊົນທັງປວງວ່າ ພຣະຜູ້ເປັນເຈົ້າ ຜູ້ມີອຳນາດຍິ່ງໃຫຍ່
ກ່າວດັ່ງນີ້:

ເມືອງຊີໂອນ ຈະຖືກໄຖເໝືອນດັ່ງໄຖນາ
  ນະຄອນ ເຢຣູຊາເລັມ ຈະກາຍເປັນກອງຫີນໃຫຍ່
ແລະເທິງພູທີ່ຕັ້ງພຣະວິຫານຈະກາຍເປັນປ່າດົງ.

[19]ກະສັດ ເຮເຊກີຢາ ແລະຊາວ ຢູດາ ທັງປວງກໍໄດ້ຂ້າ ມີກາ ແຕ່ຊົງຢຳເກງ ພຣະຜູ້ເປັນເຈົ້າ
ແລະຊົງ ເຮັດໃຫ້ພຣະອົງຊອບພຣະໄທ ແລ້ວ ພຣະຜູ້ເປັນເຈົ້າ ໄດ້ຊົງປ່ຽນພຣະໄທບໍ່ນຳໄພພິບັດ
ມາສູ່ພວກເຂົາ ບັດນີ້ ພວກເຮົາກຳລັງນຳໄພພິບັດອັນໜ້າຢ້ານມາສູ່ພວກເຮົາເອງ."

[20](ມີຊາຍອີກຄົນໜຶ່ງໄດ້ເວົ້າໃນພຣະນາມຂອງ ພຣະຜູ້ເປັນເຈົ້າ ຊາຍຜູ້ນີ້ຊື່ວ່າ ອູຣີຢາ ເປັນ
ລູກຂອງ ເຊມາຢາ ຊາວເມືອງ ກີຣີຢາດ-ເຢອາຣີມ ລາວໄດ້ເວົ້າຕໍ່ສູ້ເມືອງ ແລະປະເທດນີ້ເໝືອນ
ກັບ ເຢເຣມີຢາ ໄດ້ເວົ້າ. [21]ເມື່ອກະສັດ ເຢໂຮຢາກີມ ກັບພວກນາຍທະຫານຂອງພຣະອົງ ແລະ
ພວກເຈົ້ານາຍໄດ້ຍິນ ອູຣີຢາ ເວົ້າແລ້ວ ພຣະອົງກໍຊອກຫາຊ່ອງທາງຈະຂ້າ ອູຣີຢາ ເສຍ ແຕ່ເມື່ອ
ອູຣີຢາ ໄດ້ຮູ້ເລື່ອງນີ້ ລາວກໍຢ້ານ ຈຶ່ງປົບໜີໄປຍັງປະເທດ ເອຢິບ. [22]ກະສັດ ເຢໂຮຢາກີມ ຈຶ່ງສົ່ງ
ເອນນາທານ ລູກຊາຍຂອງ ອັກໂບ ກັບຄົນອື່ນອີກບາງຄົນ ໄປຈັບ ເອົາ ອູຣີຢາ ມາຈາກ ເອຢິບ.
[23]ພວກເຂົາໄດ້ນຳ ອູຣີຢາ ມາໃຫ້ກະສັດ ເຢໂຮຢາກີມ ແລ້ວພຣະອົງໄດ້ຂ້າ ອູຣີຢາ ແລະໄດ້ໂຍນ
ສົບຂອງລາວເຂົ້າໄປໃນບ່ອນຝັງສົບຂອງປະຊາຊົນທົ່ວໄປ."

[24]ແຕ່ ເຢເຣມີຢາ ນັ້ນບໍ່ໄດ້ຖືກມອບໃຫ້ປະຊາຊົນປະຫານຊີວິດ ຍ້ອນວ່າ ອາຣີກາມ ລູກຊາຍ
ຊາຟານ ໄດ້ຊ່ອຍເຫລືອໄວ້.

# ບົດທີ 27

## ບົດຮຽນຈາກແອກ

1ໃນຕົ້ນລາຊະການ ເຢໂຮຢາກິມ ລາຊະບຸດຂອງ ໂຢສີຢາ ກະສັດແຫ່ງ ຢູດາ ພຣະທຳນີ້ມາ
ຈາກ ພຣະຜູ້ເປັນເຈົ້າ ເຖິງ ເຢເຣມີຢາວ່າ 2ພຣະຜູ້ເປັນເຈົ້າກ່າວກັບຂ້າພະເຈົ້າດັ່ງນີ້ວ່າ “ຈົ່ງເຮັດ
ສາຍຮັດ ແລະແອກສຳລັບຕົວເຈົ້າ ຈົ່ງສວມຄໍຂອງເຈົ້າ 3ແລະສົ່ງມັນໄປຍັງກະສັດແຫ່ງ ເອໂດມ
ກະສັດແຫ່ງ ໂມອາບ ແລະກະສັດແຫ່ງຄົນ ອຳໂມນ ກະສັດແຫ່ງ ຕີເຣ ແລະກະສັດແຫ່ງຊີໂດນ
ດ້ວຍມືຂອງຜູ້ສົ່ງຂ່າວທີ່ມາເຂົ້າເຝົ້າ ເຊເດກີຢາ ກະສັດແຫ່ງ ຢູດາ ທີ່ກຸງ ເຢຣູຊາເລັມ 4ຈົ່ງຝາກຄຳ
ເຫລົ່ານີ້ແກ່ບັນດານາຍຂອງພວກເຂົາວ່າ ‘ພຣະຜູ້ເປັນເຈົ້າ ຈອມໂຍທາ ພຣະເຈົ້າ ແຫ່ງ ອິສຣາ-
ເອນ ກ່າວດັ່ງນີ້ວ່າ ເຈົ້າຈົ່ງກ່າວເລື່ອງຕໍ່ໄປນີ້ໃຫ້ນາຍຂອງເຈົ້າຟັງວ່າ 5ນີ້ຄືເຮົາເອງ ຜູ້ໄດ້ສ້າງ
ໂລກ ທັງມະນຸດ ແລະສັດຊຶ່ງຢູ່ເທິງພື້ນດິນ ດ້ວຍລິດທານຸພາບອັນຍິ່ງໃຫຍ່ ແລະດ້ວຍແຂນທີ່
ຢຽດອອກຂອງເຮົາ ແລະເຮົາຈະໃຫ້ແກ່ຜູ້ໃດກໍໄດ້ສຸດແຕ່ເຮົາເຫັນດີ 6ບັດນີ້ ເຮົາໄດ້ໃຫ້ແຜ່ນດິນ
ເຫລົ່ານີ້ທັງໝົດໄວ້ໃນມືຂອງ ເນບູກາດເນັດຊາ ກະສັດແຫ່ງ ບາບີໂລນ ຜູ້ຮັບໃຊ້ຂອງເຮົາ ແລະ
ເຮົາໄດ້ໃຫ້ສັດປ່າທັງແກ່ລາວເພື່ອຈະບົວລະບັດລາວ 7ບັນດາປະຊາຊາດທັງໝົດຈະຕ້ອງບົວລະ-
ບັດຕົວລາວ ລູກ ແລະຫລານຂອງລາວ ຈົນກວ່າເວລາກຳນົດແຫ່ງ ແຜ່ນດິນຂອງລາວເອງຈະ
ມາເຖິງ ແລ້ວຫລາຍປະຊາຊາດ ແລະບັນດາມະຫາກະສັດຈະເຮັດໃຫ້ລາວເປັນຂ້າທາດຂອງ
ພວກເຂົາທັງຫລາຍ 8ແຕ່ຕໍ່ມາຖ້າປະຊາຊາດໃດ ຫລືລາຊະອານາຈັກໃດ ຈະບໍ່ບົວລະບັດ ເນບູ-
ກາດເນັດຊາ ກະສັດແຫ່ງ ບາບີໂລນ ຄົນນີ້ ແລະບໍ່ຍອມວາງຄໍໄວ້ໃຕ້ແອກຂອງກະສັດ ບາບີໂລນ
ເຮົາຈະລົງໂທດປະຊາຊາດນັ້ນດ້ວຍດາບ ດ້ວຍການອຶດຫິວອາຫານ ແລະດ້ວຍພະຍາດລະບາດ
ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ ຈົນກວ່າເຮົາຈະລ້າງຜານເສຍດ້ວຍມືຂອງລາວ 9ເພາະສະນັ້ນ
ຢ່າຟັງຜູ້ປະກາດພຣະທຳ ຫລືພວກຜູ້ທຳນວຍ ຫລືຄົນຊ່າງຝັນຂອງເຈົ້າ ຫລືໝໍດູ ຫລືນັກເວດ-
ມົນຄາຖາຂອງເຈົ້າ ຜູ້ຊຶ່ງກ່າວແກ່ເຈົ້າວ່າ “ທ່ານຈະບໍ່ບົວລະບັດກະສັດແຫ່ງກຸງ ບາບີໂລນ ດອກ”
10ເພາະຊຶ່ງເຂົາທຳນວຍໃຫ້ທ່ານນັ້ນເປັນຄວາມບໍ່ຈິງ ອັນຍັງເຮັດໃຫ້ທ່ານຕ້ອງໂຍກຍ້າຍໄກໄປ
ຈາກແຜ່ນດິນຂອງຕົນ ແລະເຮົາຈະຂັບໄລ່ທ່ານອອກໄປ ແລະທ່ານຈະພິນາດ 11ແຕ່ປະຊາຊາດ
ໃດຊຶ່ງເອົາຄໍຂອງຕົນວາງໄວ້ໃຕ້ແອກຂອງກະສັດແຫ່ງ ບາບີໂລນ ແລະບົວລະບັດເພິ່ນ ເຮົາຈະ
ປະຜູ້ນັ້ນໄວ້ເທິງແຜ່ນດິນຂອງລາວ ເພື່ອໃຫ້ເຮັດໄຮ່ໄຖນາແລະໃຫ້ອາໄສຢູ່ບ່ອນນັ້ນ ພຣະຜູ້-
ເປັນເຈົ້າກ່າວດັ່ງນີ້ແຫລະ’”

## ເຢເຣມີຢາເຕືອນໃຫ້ເຊື່ອຟັງກະສັດເນບູກາດເນັດຊາ

12ຂ້າພະເຈົ້າໄດ້ທູນ ເຊເດກີຢາ ກະສັດແຫ່ງ ຢູດາ ຕາມບັນດາຖ້ອຍຄຳເຫລົ່ານີ້ ວ່າ “ຈົ່ງເອົາຄໍ
ຂອງທ່ານໄວ້ໃຕ້ແອກຂອງກະສັດແຫ່ງ ບາບີໂລນ ແລະບົວລະບັດລາວແລະປະຊາຊົນຂອງລາວ
ແລະຈົ່ງມີຊີວິດຢູ່ 13ເປັນຫຍັງທ່ານກັບຊົນຊາດຂອງທ່ານຈະມາຕາຍເສຍດ້ວຍດາບ ດ້ວຍການ
ອຶດຫິວອາຫານ ແລະດ້ວຍພະຍາດລະບາດ ດັ່ງທີ່ ພຣະຜູ້ເປັນເຈົ້າ ຊົງອອກຄຳເວົ້າກ່ຽວກັບປະ-
ຊາຊາດໃດໆ ຊຶ່ງຈະບໍ່ບົວລະບັດກະສັດແຫ່ງ ບາບີໂລນ 14ຢ່າຟັງຖ້ອຍຄຳຂອງຜູ້ປະກາດພຣະ-
ທຳຜູ້ກ່າວແກ່ເຈົ້າວ່າ ‘ທ່ານຈະບໍ່ບົວລະບັດກະສັດແຫ່ງ ບາບີໂລນ ດອກ’ ເພາະຊຶ່ງພວກເຂົາທຳ

ນວຍແກ່ທ່ານນັ້ນກໍເປັນການຂີ້ຕົວະ [15]ພຣະຜູ້ເປັນເຈົ້າກ່າວວ່າ ເຮົາບໍ່ໄດ້ໃຊ້ພວກເຂົາ ແຕ່ພວກ
ເຂົາທຳນວຍຄວາມບໍ່ຈິງໃນນາມຂອງເຮົາ ຊຶ່ງເຮັດໃຫ້ເຮົາຕ້ອງຂັບໄລ່ເຈົ້າອອກໄປ ແລະເຈົ້າຈະ
ຕ້ອງຈິບຫາຍ ທັງຕົວເຈົ້າ ແລະຜູ້ປະກາດພຣະທຳທັງຫລາຍຊຶ່ງກ່າວທຳນວຍໃຫ້ແກ່ເຈົ້າ”

[16]ຂ້າພະເຈົ້າກໍໄດ້ເວົ້າກັບປະໂລຫິດ ແລະປະຊາຊົນທັງໝົດວ່າ “ພຣະຜູ້ເປັນເຈົ້າກ່າວດັ່ງນີ້
ວ່າ ຢ່າເຊື່ອຟັງຖ້ອຍຄຳຂອງຜູ້ປະກາດພຣະທຳຂອງເຈົ້າ ຊຶ່ງທຳນວຍໃຫ້ແກ່ເຈົ້າວ່າ ‘ເບິ່ງແມ
ອີກບໍ່ດົນ ເຂົາຈະນຳເຄື່ອງໃຊ້ຂອງພຣະນິເວດແຫ່ງພຣະຜູ້ເປັນເຈົ້າກັບມາຈາກກຸງບາບີໂລນ’
ເພາະຊຶ່ງພວກເຂົາກ່າວທຳນວຍແກ່ທ່ານນັ້ນກໍເປັນຄວາມບໍ່ຈິງ [17]ຢ່າເຊື່ອຟັງພວກເຂົາ ຈົ່ງບົວ-
ລະບັດກະສັດແຫ່ງບາບີໂລນ ແລະມີຊີວິດຢູ່ ເປັນຫຍັງເມືອງນີ້ຈະຮົກຮ້າງເສຍ [18]ຖ້າພວກເຂົາ
ເຫລົ່ານັ້ນເປັນຜູ້ປະກາດພຣະທຳ ແລະຖ້າພຣະທຳຂອງພຣະຜູ້ເປັນເຈົ້າຢູ່ກັບພວກເຂົາ ກໍຂໍໃຫ້
ພວກເຂົາທູນອ້ອນວອນຕໍ່ພຣະຜູ້ເປັນເຈົ້າຈອມໂຍທາວ່າ ໃຫ້ເຄື່ອງໃຊ້ຊຶ່ງຍັງເຫລືອຢູ່ໃນພຣະນິ-
ເວດຂອງພຣະຜູ້ເປັນເຈົ້າ ແລະໃນພະລາຊະວັງຂອງກະສັດແຫ່ງຢູດາ ແລະໃນກຸງເຢຣູຊາ-
ເລັມ ຢ່າໃຫ້ໄປຍັງບາບີໂລນ [19]ເພາະພຣະຜູ້ເປັນເຈົ້າຈອມໂຍທາກ່າວດັ່ງນີ້ກ່ຽວກັບບັນດາເສົາ
ຂັນທອງສຳເລັດ ຂາຕັ້ງ ແລະເຄື່ອງໃຊ້ອື່ນໆທີ່ເຫລືອຢູ່ໃນເມືອງນີ້ [20]ທີ່ເນບູກາດເນັດຊາ ກະ-
ສັດແຫ່ງບາບີໂລນບໍ່ໄດ້ປຸ້ນເອົາໄປ ເມື່ອທ່ານໄດ້ຈັບເອົາເຢໂຮຢາກິນ ລາຊະບຸດຂອງເຢໂຮ-
ຢາກິມກະສັດຂອງຢູດາ ແລະບັນດາຂ້າລາຊະການຂອງຢູດາ ແລະເຢຣູຊາເລັມຖືກກວາດ
ຕ້ອນຈາກກຸງເຢຣູຊາເລັມໄປເປັນຊະເລີຍຍັງກຸງບາບີໂລນ [21]ພຣະຜູ້ເປັນເຈົ້າຈອມໂຍທາ
ພຣະເຈົ້າແຫ່ງອິສຣາເອນກ່າວດັ່ງນີ້ກ່ຽວກັບເລື່ອງເຄື່ອງໃຊ້ຊຶ່ງຍັງເຫລືອຢູ່ໃນພຣະນິເວດຂອງ
ພຣະຜູ້ເປັນເຈົ້າ ໃນພະລາຊະວັງຂອງກະສັດແຫ່ງຢູດາ ແລະໃນກຸງເຢຣູຊາເລັມ [22]ພຣະຜູ້-
ເປັນເຈົ້າກ່າວວ່າ ເຄື່ອງໃຊ້ເຫລົ່ານີ້ຈະຖືກຂົນໄປຍັງບາບີໂລນ ແລະຈະຄ້າງຢູ່ບ່ອນນັ້ນຈົນເຖິງ
ມື້ທີ່ເຮົາເອົາໃຈໃສ່ມັນ ແລ້ວເຮົາຈຶ່ງຈະນຳມັນກັບຂຶ້ນມາ ແລະໃຫ້ກັບສູ່ສະຖານທີ່ນີ້”

# ບົດທີ 28

## ຄຳຜູ້ປະກາດພຣະທຳບໍ່ຈິງຂອງຮານັນຢາ

[1]ຕໍ່ມາໃນປີດຽວກັນນັ້ນເມື່ອຕົ້ນລາຊະການເຊເດກີຢາ ກະສັດແຫ່ງຢູດາໃນເດືອນທີ່ຫ້າປີທີ່ສີ່
ຮານານີຢາລູກຊາຍຂອງອັດຊູເຣຜູ້ປະກາດພຣະທຳຈາກກິເບໂອນ ໄດ້ເວົ້າກັບຂ້າພະເຈົ້າໃນ
ພຣະນິເວດຂອງພຣະຜູ້ເປັນເຈົ້າ ຕໍ່ໜ້າບັນດາປະໂລຫິດ ແລະປະຊາຊົນທັງຫລາຍວ່າ [2]“ພຣະ-
ຜູ້ເປັນເຈົ້າຈອມໂຍທາ ພຣະເຈົ້າແຫ່ງອິສຣາເອນກ່າວດັ່ງນີ້ວ່າ ເຮົາໄດ້ຫັກແອກຂອງກະສັດ
ແຫ່ງບາບີໂລນແລ້ວ [3]ພາຍໃນສອງປີ ເຮົາຈະນຳເຄື່ອງໃຊ້ທັງໝົດຂອງພຣະນິເວດແຫ່ງພຣະ-
ຜູ້ເປັນເຈົ້າກັບມາຍັງທີ່ນີ້ ຊຶ່ງເປັນພາຊະນະທີ່ເນບູກາດເນັດຊາກະສັດແຫ່ງບາບີໂລນປຸ້ນໄປ
ຈາກທີ່ນີ້ ແລະຂົນໄປຍັງບາບີໂລນ [4]ເຮົາຈະນຳເຢໂຮຢາກິນລາຊະບຸດຂອງເຢໂຮຢາກິມກະ-
ສັດແຫ່ງຢູດາ ແລະບັນດາຜູ້ທີ່ຖືກກວາດຈາກຢູດາ ໄປຍັງບາບີໂລນ ກັບມາຍັງທີ່ນີ້ ພຣະຜູ້-
ເປັນເຈົ້າກ່າວດັ່ງນີ້ແຫລະວ່າ ເພາະເຮົາຈະຫັກແອກຂອງກະສັດແຫ່ງບາບີໂລນ”

[5]ແລ້ວເຢເຣມີຢາຜູ້ປະກາດພຣະທຳກໍເວົ້າກັບຮານານີຢາຜູ້ປະກາດພຣະທຳຕໍ່ໜ້າບັນດາປະ-

ໂລຫິດ ແລະຕໍ່ໜ້າປະຊາຊົນທັງປວງຜູ້ຢືນຢູ່ໃນພຣະນິເວດຂອງ ພຣະຜູ້ເປັນເຈົ້າ 6ເຢເຣມີຢາຜູ້
ປະກາດພຣະທຳກ່າວວ່າ "ອາແມນ ຂໍພຣະຜູ້ເປັນເຈົ້າຊົງກະທຳເຊັ່ນນັ້ນເຖີດ ຂໍພຣະຜູ້ເປັນ-
ເຈົ້າ ຊົງ ເຮັດ ໃຫ້ຖ້ອຍ ຄຳທີ່ທ່ານ ທຳນວຍ ນັ້ນ ເປັນ ຈິງ ແລະ ນຳ ເຄື່ອງ ໃຊ້ ແຫ່ງ ພຣະນິເວດ ຂອງ
ພຣະຜູ້ເປັນເຈົ້າ ແລະບັນດາຜູ້ຖືກກວາດໄປທັງໝົດກັບມາຈາກ ບາບີໂລນ 7ເຖິງປານນັ້ນ ກໍຂໍຟັງ
ຖ້ອຍຄຳທີ່ຂ້າພະເຈົ້າເວົ້າໃຫ້ທ່ານໄດ້ຍິນ ແລະໃຫ້ປະຊາຊົນທັງຫລາຍນີ້ໄດ້ຍິນ 8ບັນດາຜູ້ປະ-
ກາດພຣະທຳຊຶ່ງຢູ່ກ່ອນທ່ານ ແລະຂ້າພະເຈົ້າຕັ້ງແຕ່ບູຮານໄດ້ທຳນວຍເຖິງສົງຄາມ ເຫດຮ້າຍ
ຕ່າງໆ ແລະພະຍາດລະບາດອັນມີແກ່ຫລາຍປະເທດ ແລະຫລາຍລາຊະອານາຈັກໃຫຍ່ໆ
9ສ່ວນຜູ້ປະກາດພຣະທຳທີ່ທຳນວຍວ່າຈະມີສັນຕິສຸກ ເມື່ອເປັນຈິງຕາມຖ້ອຍຄຳຂອງຜູ້ປະກາດ
ພຣະທຳນັ້ນ ຈຶ່ງຮູ້ວ່າພຣະຜູ້ເປັນເຈົ້າຊົງໃຊ້ຜູ້ປະກາດພຣະທຳນັ້ນແທ້"

10ແລ້ວ ຮານານີຢາ ຜູ້ປະກາດພຣະທຳກໍປົດແອກອອກຈາກຄໍຂອງ ເຢເຣມີຢາ ຜູ້ປະກາດພຣະ-
ທຳ ແລະຫັກມັນເສຍ 11ແລະ ຮານານີຢາ ໄດ້ກ່າວຕໍ່ໜ້າປະຊາຊົນທັງໝົດວ່າ "ພຣະຜູ້ເປັນເຈົ້າ
ກ່າວດັ່ງນີ້ວ່າ ຢ່າງນັ້ນແຫລະ ເຮົາຈະຫັກແອກຂອງ ເນບູກາດເນັດຊາ ກະສັດຂອງ ບາບີໂລນ
ຈາກຄໍຂອງບັນດາປະຊາຊາດທັງໝົດພາຍໃນສອງປີ" ແຕ່ ເຢເຣມີຢາ ຜູ້ປະກາດພຣະທຳກໍອອກ
ໄປເສຍ

12ຫລັງຈາກທີ່ ຮານານີຢາ ຜູ້ປະກາດພຣະທຳຫັກແອກຈາກຄໍຂອງ ເຢເຣມີຢາ ຜູ້ປະກາດພຣະ-
ທຳ ພຣະທຳຂອງ ພຣະຜູ້ເປັນເຈົ້າ ກໍມາຍັງ ເຢເຣມີຢາ ວ່າ 13"ຈົ່ງໄປບອກ ຮານານີຢາ ວ່າ ພຣະ-
ຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເຈົ້າໄດ້ຫັກແອກໄມ້ ແຕ່ເຈົ້າຈະເຮັດແອກເຫລັກໄວ້ໃຫ້ພວກເຂົາແທນ
14ເພາະ ພຣະຜູ້ເປັນເຈົ້າ ຈອມໂຍທາ ພຣະເຈົ້າ ແຫ່ງ ອິສຣາເອນ ກ່າວດັ່ງນີ້ວ່າ ເຮົາໄດ້ວາງ
ແອກເຫລັກໄວ້ເທິງຄໍບັນດາປະຊາຊາດເຫລົ່ານີ້ທັງໝົດ ໃຫ້ເຂົາບົວລະບັດ ເນບູກາດເນັດຊາ ກະ-
ສັດແຫ່ງ ບາບີໂລນ ແລະພວກເຂົາຈະບົວລະບັດລາວ ເພາະເຮົາໄດ້ຍົກໃຫ້ລາວແລ້ວເຖິງແມ່ນ
ວ່າສັດປ່າກໍຕາມ"

## ເຢເຣມີຢາທຳນວຍເຖິງການຕາຍຂອງຮານານີຢາ

15ແລະ ເຢເຣມີຢາ ຜູ້ປະກາດພຣະທຳໄດ້ເວົ້າກັບ ຮານານີຢາ ຜູ້ປະກາດພຣະທຳວ່າ "ຮານານີ-
ຢາ ຂໍທ່ານຟັງ ພຣະຜູ້ເປັນເຈົ້າບໍ່ໄດ້ຊົງໃຊ້ທ່ານ ແຕ່ທ່ານໄດ້ເຮັດໃຫ້ຊົນຊາດນີ້ວາງໃຈໃນ
ຄວາມບໍ່ຈິງ 16ເພາະສະນັ້ນ ພຣະຜູ້ເປັນເຈົ້າກ່າວວ່າ ເບິ່ງແມ ເຮົາຈະຍ້າຍເຈົ້າໄປຈາກພື້ນ
ໂລກ ໃນປີດຽວນີ້ເຈົ້າຈະຕ້ອງຕາຍ ເພາະເຈົ້າໄດ້ສອນໃຫ້ກະບົດຕໍ່ ພຣະຜູ້ເປັນເຈົ້າ"

17ໃນປີດຽວກັນນັ້ນ ເດືອນທີເຈັດ ຮານານີຢາ ຜູ້ປະກາດພຣະທຳກໍຕາຍ

# ບົດທີ 29

## ເຢເຣມີຢາຂຽນເຖິງພວກຊະເລີຍໃນບາບີໂລນ

1ຕໍ່ໄປນີ້ເປັນຖ້ອຍຄຳໃນຈົດໝາຍຊຶ່ງ ເຢເຣມີຢາ ຜູ້ປະກາດພຣະທຳຝາກໄປຈາກກຸງ ເຢຣູຊາ-
ເລັມ ເຖິງພວກຜູ້ໃຫຍ່ທີ່ເຫລືອຢູ່ຈາກພວກທີ່ເປັນຊະເລີຍ ແລະເຖິງບັນດາປະໂລຫິດ ບັນດາຜູ້
ປະກາດພຣະທຳ ແລະປະຊາຊົນທັງໝົດ ຜູ້ຊຶ່ງ ເນບູກາດເນັດຊາ ໄດ້ໃຫ້ກວາດໄປຈາກກຸງ ເຢຣູ-

ຊາເລັມ ເຖິງ ບາບີໂລນ [2](ອັນນີ້ເປັນເລື່ອງຫລັງຈາກກະສັດ ເຢໂຮຢາກິນ ແລະພະລາຊິນີ ພວກ
ຊາຍຕອນ ບັນດາເຈົ້ານາຍຂອງ ຢູດາ ແລະ ເຢຣູຊາເລັມ ບັນດາຊ່າງໄມ້ ແລະຊ່າງເຫລັກໄດ້
ອອກໄປຈາກກຸງ ເຢຣູຊາເລັມ ແລ້ວ) [3]ຈົດໝາຍນັ້ນໄດ້ສົ່ງໄປດ້ວຍມືຂອງ ເອລາສາ ລູກຊາຍຂອງ
ຊາຟານ ແລະ ເກມາຣີຢາ ລູກຊາຍ ຮິນກີຢາ (ຜູ້ຊຶ່ງ ເຊເດກີຢາ ກະສັດແຫ່ງ ຢູດາ ສົ່ງໄປ ບາບີ-
ໂລນ ໄປຍັງ ເນບູກາດເນັດຊາ ກະສັດແຫ່ງ ບາບີໂລນ) ຈົດໝາຍນັ້ນກ່າວວ່າ

[4]"ພຣະຜູ້ເປັນເຈົ້າ ຈອມໂຍທາ ພຣະເຈົ້າ ແຫ່ງ ອິສຣາເອນ ກ່າວດັ່ງນີ້ແກ່ບັນດາຜູ້ເປັນຊະ-
ເລີຍ ຜູ້ຊຶ່ງເຮົາໄດ້ເນລະເທດໄປຈາກກຸງ ເຢຣູຊາເລັມ ເຖິງ ບາບີໂລນນັ້ນວ່າ [5]ຈົ່ງສ້າງເຮືອນຂອງ
ເຈົ້າ ແລະອາໄສຢູ່ໃນເຮືອນນັ້ນ ຈົ່ງປູກສວນ ແລະຮັບປະທານໝາກໄມ້ທີ່ໄດ້ນັ້ນ [6]ຈົ່ງມີເມຍ
ແລະໃຫ້ກຳເນີດລູກຊາຍລູກສາວ ຈົ່ງຫາເມຍໃຫ້ລູກຊາຍຂອງເຈົ້າທັງຫລາຍ ແລະຍົກລູກສາວ
ຂອງເຈົ້າໃຫ້ແຕ່ງງານເສຍ ເພື່ອນາງຈະໃຫ້ກຳເນີດລູກຊາຍແລະລູກສາວ ເພື່ອເຈົ້າທັງຫລາຍ
ຈະທະວີຫລາຍຂຶ້ນໃນບ່ອນນັ້ນ ແລະບໍ່ໜ້ອຍລົງ [7]ແຕ່ຈົ່ງສົ່ງເສີມສັນຕິພາບຂອງເມືອງ ຊຶ່ງເຮົາ
ໄດ້ກວາດ ເຈົ້າ ໃຫ້ໄປ ເປັນຊະເລີຍຢູ່ນັ້ນ ແລະ ຈົ່ງອະທິຖານຕໍ່ ພຣະຜູ້ເປັນເຈົ້າ ເພື່ອ ເມືອງນັ້ນ
ເພາະວ່າເຈົ້າທັງຫລາຍຈະພົບສັນຕິສຸກຂອງເຈົ້າໃນສັນຕິພາບຂອງເມືອງນັ້ນ

[8]ເພາະ ພຣະຜູ້ເປັນເຈົ້າ ຈອມໂຍທາ ພຣະເຈົ້າ ແຫ່ງ ອິສຣາເອນ ກ່າວດັ່ງນີ້ວ່າ ຢ່າຍອມໃຫ້ຜູ້
ປະກາດພຣະທຳຂອງເຈົ້າທັງຫລາຍ ຫລືພວກຜູ້ທຳນວຍຂອງເຈົ້າ ຜູ້ຢູ່ທ່າມກາງເຈົ້າຫລອກລວງ
ເຈົ້າ ແລະຢ່າເຊື່ອຄວາມຝັນຊຶ່ງພວກເຂົາທັງຫລາຍໄດ້ຝັນເຫັນ [9]ເພາະທີ່ພວກເຂົາທຳນວຍແກ່
ເຈົ້າໃນນາມຂອງເຮົານັ້ນເປັນຄວາມບໍ່ຈິງ ເຮົາບໍ່ໄດ້ໃຊ້ພວກເຂົາໄປ ພຣະຜູ້ເປັນເຈົ້າກ່າວດັ່ງນີ້
ແຫລະ

[10]ເພາະ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເມື່ອເຈັດສິບປີແຫ່ງ ບາບີໂລນ ຄົບແລ້ວ ເຮົາຈະຢ້ຽມ-
ຢາມເຈົ້າ ແລະຈະໃຫ້ຖ້ອຍຄຳອັນດີຂອງເຮົາສຳເລັດເພື່ອເຈົ້າ ແລະຈະນຳເຈົ້າກັບມາສູ່ສະຖານ-
ທີ່ນີ້ [11]ພຣະຜູ້ເປັນເຈົ້າ ກ່າວວ່າ ເພາະ ເຮົາຮູ້ແຜນການທີ່ເຮົາມີໄວ້ສຳລັບເຈົ້າ ເປັນແຜນການ
ເພື່ອສັນຕິສຸກ ບໍ່ແມ່ນເພື່ອຄວາມທຸກລຳບາກ ເພື່ອຈະໃຫ້ອະນາຄົດຕາມທີ່ຄາດໝາຍໄວ້ແກ່ເຈົ້າ
[12]ແລ້ວເຈົ້າຈະທູນຂໍຕໍ່ເຮົາ ມາອະທິຖານຕໍ່ເຮົາ ແລະເຮົາຈະຟັງເຈົ້າ [13]ເຈົ້າຈະສະແຫວງຫາເຮົາ
ແລະພົບ ເຮົາ ເມື່ອເຈົ້າສະແຫວງຫາເຮົາດ້ວຍສິ້ນສຸດໃຈຂອງເຈົ້າ [14]ພຣະຜູ້ເປັນເຈົ້າ ກ່າວວ່າ
ເຮົາຈະໃຫ້ເຈົ້າພົບເຮົາ ແລະເຮົາຈະໃຫ້ການເປັນຊະເລີຍຂອງເຈົ້າກັບສູ່ສະພາບດີ ແລະຮວບ-
ຮວມເຈົ້າມາຈາກບັນດາປະຊາຊາດ ແລະຈາກທຸກບ່ອນ ທີ່ເຮົາຂັບໄລ່ເຈົ້າໃຫ້ໄປຢູ່ນັ້ນ ພຣະຜູ້-
ເປັນເຈົ້າ ກ່າວດັ່ງນີ້ແຫລະ ແລະ ເຮົາຈະນຳເຈົ້າກັບມາຍັງບ່ອນທີ່ເຮົາເນລະເທດເຈົ້າໃຫ້ຈາກໄປ
ນັ້ນ

[15]ເພາະເຈົ້າທັງຫລາຍໄດ້ກ່າວວ່າ 'ພຣະຜູ້ເປັນເຈົ້າ ໄດ້ໃຫ້ມີຜູ້ປະກາດພຣະທຳສຳລັບເຮົາທັງ-
ຫລາຍໃນ ບາບີໂລນ' [16]ຈົ່ງຮູ້ວ່າ ພຣະຜູ້ເປັນເຈົ້າ ກ່າວດັ່ງນີ້ກ່ຽວກັບກະສັດ ຜູ້ປະທັບເທິງພະທີ່
ນັ່ງຂອງ ດາວິດ ແລະກ່ຽວກັບປະຊາຊົນທັງໝົດຜູ້ອາໄສຢູ່ໃນເມືອງນີ້ ຄືຍາດພີ່ນ້ອງຂອງທ່ານ
ຜູ້ບໍ່ໄດ້ຖືກເນລະເທດໄປກັບທ່ານວ່າ [17]ພຣະຜູ້ເປັນເຈົ້າ ຈອມໂຍທາກ່າວດັ່ງນີ້ວ່າ ເບິ່ງແມ ເຮົາ
ຈະສົ່ງດາບ ການອຶດຫິວອາຫານ ແລະພະຍາດລະບາດມາເໜືອພວກເຂົາທັງຫລາຍ ແລະເຮົາ

ຈະເຮັດໃຫ້ພວກເຂົາເປັນເໝືອນກັບໝາກເດື່ອເທດທີ່ບໍ່ດີ ຊຶ່ງເນົ່າຫລາຍຈົນເຂົາຮັບປະທານບໍ່ໄດ້
[18]ເຮົາຈະຂົ່ມເຫັງພວກເຂົາດ້ວຍດາບ ການອຶດຫິວອາຫານ ແລະພະຍາດລະບາດ ແລະຈະເຮັດ
ໃຫ້ພວກເຂົາຍ້າຍໄປຢູ່ໃນລາຊະອານາຈັກທັງໝົດແຫ່ງແຜ່ນດິນໂລກ ໃຫ້ເປັນຄຳສາບແຊ່ງ ໃຫ້
ເປັນຄວາມປະຫລາດໃຈ ໃຫ້ເປັນທີ່ເຍາະເຍີ້ຍ ເປັນທີ່ນິນທາທ່າມກາງບັນດາປະຊາຊາດຊຶ່ງເຮົາ
ໄດ້ຂັບໄລ່ໃຫ້ເຂົາໄປຢູ່ນັ້ນ [19]ພຣະຜູ້ເປັນເຈົ້າກ່າວວ່າ ເພາະວ່າພວກເຂົາບໍ່ເຊື່ອຟັງຖ້ອຍຄຳຂອງ
ເຮົາທີ່ສົ່ງມາຍັງພວກເຂົາຢ່າງບໍ່ຂາດສາຍ ໂດຍຜູ້ປະກາດພຣະທຳຜູ້ຮັບໃຊ້ຂອງເຮົາ ແຕ່ເຈົ້າ
ທັງຫລາຍບໍ່ຍອມຟັງ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ” [20]ເຈົ້າທັງປວງຜູ້ຖືກເນລະເທດ ຜູ້ຊຶ່ງ
ເຮົາສົ່ງໄປຈາກກຸງ ເຢຣູຊາເລັມ ເຖິງ ບາບີໂລນ ຈົ່ງຟັງພຣະທຳຂອງພຣະຜູ້ເປັນເຈົ້າທີ່ວ່າ
[21]“ພຣະຜູ້ເປັນເຈົ້າຈອມໂຍທາ ພຣະເຈົ້າຂອງ ອິສຣາເອນ ກ່າວດັ່ງນີ້ກ່ຽວກັບ ອາຮາບ ລູກ
ຊາຍຂອງ ໂກລາຢາ ແລະ ເຊເດກີຢາ ລູກຊາຍ ມາອາເສຢາ ຜູ້ຊຶ່ງໄດ້ທຳນວຍບໍ່ຈິງແກ່ເຈົ້າໃນ
ນາມຂອງເຮົາ ເບິ່ງແມ ເຮົາຈະມອບເຂົາທັງສອງໄວ້ໃນມືຂອງ ເນບູກາດເນັດຊາ ກະສັດແຫ່ງ
ບາບີໂລນ ແລະເພິ່ນຈະຂ້າເຂົາທັງສອງເສຍຕໍ່ໜ້າຕໍ່ຕາເຈົ້າ [22]ຍ້ອນພວກເຂົາທັງສອງ ບັນດາຜູ້
ທີ່ຖືກເນລະເທດຈາກ ຢູດາ ໄປເຖິງ ບາບີໂລນ ຈະໃຊ້ຄຳສາບແຊ່ງຕໍ່ໄປນີ້ວ່າ ‘ຂໍພຣະຜູ້ເປັນເຈົ້າ
ຊົງເຮັດກັບເຈົ້າເໝືອນ ເຊເດກີຢາ ແລະ ອາຮາບ ຜູ້ທີ່ກະສັດ ບາບີໂລນ ເຜົາເສຍດ້ວຍໄຟ’
[23]ເພາະພວກເຂົາທັງສອງໄດ້ເຮັດຄວາມຊົ່ວຮ້າຍໃນ ອິສຣາເອນ ໄດ້ລ່ວງປະເວນີກັບເມຍຂອງ
ເພື່ອນບ້ານ ແລະໄດ້ເວົ້າຖ້ອຍຄຳບໍ່ຈິງໃນນາມຂອງເຮົາ ຊຶ່ງເຮົາບໍ່ໄດ້ບັນຊາພວກເຂົາ ເຮົາເປັນ
ຜູ້ທີ່ຮູ້ ແລະເຮົາເປັນພະຍານ” ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ
[24]ເຈົ້າຈົ່ງບອກ ເຊມາຢາ ຊາວ ເນເຮລາມ ວ່າ [25]“ພຣະຜູ້ເປັນເຈົ້າຈອມໂຍທາ ພຣະເຈົ້າແຫ່ງ
ອິສຣາເອນ ກ່າວດັ່ງນີ້ວ່າ ເຈົ້າໄດ້ສົ່ງຈົດໝາຍໃນນາມຂອງເຈົ້າໄປຍັງປະຊາຊົນທັງປວງຜູ້ຢູ່ໃນ
ກຸງ ເຢຣູຊາເລັມ ໄປຍັງ ເຊຟານີຢາ ລູກຊາຍປະໂລຫິດ ມາອາເສຢາ ແລະໄປຍັງປະໂລຫິດທັງ
ປວງວ່າ [26]‘ພຣະຜູ້ເປັນເຈົ້າໄດ້ຊົງເຮັດໃຫ້ເຈົ້າເປັນປະໂລຫິດແທນປະໂລຫິດ ເຢໂຮຢາດາ ໃຫ້
ເປັນເຈົ້າໜ້າທີ່ໃນພຣະນິເວດຂອງພຣະຜູ້ເປັນເຈົ້າ ຄວບຄຸມຄົນບ້າທຸກຄົນທີ່ຕັ້ງຕົວເອງເປັນຜູ້
ປະກາດພຣະທຳ ໃຫ້ຈັບພວກເຂົາໃສ່ຄຸກໄວ້’ [27]ບັດນີ້ ເປັນຫຍັງເຈົ້າຈຶ່ງບໍ່ໄດ້ຕຳໜິ ເຢເຣມີຢາ
ຊາວ ອານາໂທດ ຜູ້ຊຶ່ງຕັ້ງຕົວເອງເປັນຜູ້ປະກາດພຣະທຳແກ່ເຈົ້າ [28]ເພາະລາວໄດ້ສົ່ງຈົດໝາຍ
ມາຍັງເຮົາໃນ ບາບີໂລນ ວ່າ ‘ການທີ່ເຈົ້າເປັນຊະເລີຍນັ້ນຈະດົນນານ ຈົ່ງສ້າງເຮືອນຂອງເຈົ້າ
ແລະອາໄສຢູ່ໃນເຮືອນນັ້ນ ຈົ່ງເຮັດສວນ ແລະຮັບປະທານຜົນທີ່ໄດ້ນັ້ນ’”
[29]ປະໂລຫິດ ເຊຟານີຢາ ອ່ານຈົດໝາຍນີ້ໃຫ້ຜູ້ປະກາດພຣະທຳ ເຢເຣມີຢາ ຟັງ [30]ແລ້ວພຣະທຳ
ຂອງພຣະຜູ້ເປັນເຈົ້າກໍມາຍັງ ເຢເຣມີຢາ ວ່າ [31]“ຈົ່ງຂຽນໄປເຖິງບັນດາຜູ້ເປັນຊະເລີຍທັງປວງວ່າ
‘ພຣະຜູ້ເປັນເຈົ້າກ່າວກ່ຽວກັບ ເຊມາຢາ ຊາວ ເນເຮລາມ ວ່າ ເພາະວ່າ ເຊມາຢາ ໄດ້ທຳນວຍແກ່
ເຈົ້າ ໃນຂະນະທີ່ເຮົາບໍ່ໄດ້ໃຊ້ລາວ ແລະໄດ້ເຮັດໃຫ້ເຈົ້າວາງໃຈໃນຄຳບໍ່ຈິງ [32]ເພາະສະນັ້ນ
ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເບິ່ງແມ ເຮົາຈະລົງໂທດ ເຊມາຢາ ຊາວ ເນເຮລາມ ແລະເຊື້ອ-
ສາຍຂອງລາວ ລາວຈະບໍ່ມີຈັກຄົນໜຶ່ງທີ່ຈະອາໄສຢູ່ໃນທ່າມກາງຊົນຊາດນີ້ ແລະລາວຈະບໍ່ໄດ້
ເຫັນການດີທີ່ເຮົາຈະເຮັດແກ່ປະຊາຊົນຂອງເຮົາ ເພາະລາວໄດ້ສອນໃຫ້ກະບົດຕໍ່ພຣະຜູ້ເປັນ-

ເຈົ້າ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ'"

# ບົດທີ 30

## ຄຳໝັ້ນສັນຍາຂອງພຣະຜູ້ເປັນເຈົ້າທີ່ມີຕໍ່ເຊື້ອສາຍຂອງຢາໂຄບ

1ພຣະຜູ້ເປັນເຈົ້າຂອງຊາວອິສຣາເອນ ຊົງກ່າວຕໍ່ເຢເຣມີຢາວ່າ, 2"ຖ້ອຍຄຳທັງໝົດທີ່ເຮົາ
ໄດ້ບອກເຈົ້ານັ້ນ ຈົ່ງຂຽນໄວ້ໃນປຶ້ມຫົວໜຶ່ງ ເພາະວ່າວັນເວລາຈະມາເຖິງ. 3ເມື່ອນັ້ນເຮົາຈຶ່ງຈະ
ໃຫ້ອິສຣາເອນ ແລະຢູດາ ໄພ່ພົນຂອງເຮົາຄືນສູ່ສະພາບເດີມ ແລະຈະນຳພວກເຂົາມາຍັງ
ແຜ່ນດິນທີ່ເຮົາໄດ້ມອບໃຫ້ບັນພະບູລຸດຂອງພວກເຂົາ ພວກເຂົາຈະໄດ້ເປັນເຈົ້າຂອງແຜ່ນດິນ
ນັ້ນອີກ ເຮົາພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ແຫລະ."

4ພຣະຜູ້ເປັນເຈົ້າຊົງກ່າວເຖິງ ອິສຣາເອນ ແລະຢູດາດັ່ງນີ້:

5 "ເຮົາໄດ້ຍິນສຽງຮ້ອງໄຫ້ຍ້ອນຕື່ນຕົກໃຈ
ເປັນສຽງຢ້ານບໍ່ແມ່ນສຽງມ່ວນຊື່ນ.
6 ບັດນີ້ ຈົ່ງຖາມ ແລະຄິດເບິ່ງ
ວ່າຜູ້ຊາຍອອກລູກມີບໍ?
ເປັນຫຍັງເຈົ້າຈຶ່ງເຫັນຜູ້ຊາຍທຸກຄົນເອົາມືອູ້ມທ້ອງ
ເໝືອນຍິງຈະອອກລູກ?
ເປັນຫຍັງໜ້າຕາຂອງທຸກຄົນຈຶ່ງຂາວຊີດໄປ?
7 ວັນອັນໜ້າຢ້ານນັ້ນຈະມາເຖິງ
ບໍ່ມີວັນໃດເໝືອນກັບວັນນັ້ນ
ເພາະວ່າເປັນເວລາທຸກໃຈຂອງເຊື້ອສາຍຢາໂຄບ
ແຕ່ພວກເຂົາຈະຜ່ານພົ້ນວັນນັ້ນໄປໄດ້."

8ພຣະຜູ້ເປັນເຈົ້າຜູ້ມີອຳນາດຍິ່ງໃຫຍ່ຊົງກ່າວວ່າ "ເມື່ອວັນນັ້ນມາເຖິງ ເຮົາຈະປົດແອກອອກ
ຈາກຄໍ ແລະແກ້ໂສ້ອອກຈາກພວກເຂົາ ພວກເຂົາຈະບໍ່ເປັນທາດຮັບໃຊ້ຄົນຕ່າງຊາດອີກຕໍ່ໄປ.
9ແຕ່ຈະຮັບໃຊ້ເຮົາຄືພຣະຜູ້ເປັນເຈົ້າຂອງພວກເຂົາ ແລະຮັບໃຊ້ດາວິດຜູ້ທີ່ເຮົາຈະໃຫ້ເປັນ
ກະສັດຂອງພວກເຂົາ.

10 ຢາໂຄບຜູ້ຮັບໃຊ້ຂອງເຮົາເອີຍ ຢ່າສູ່ຢ້ານເລີຍ
ຊາວອິສຣາເອນເອີຍ ຢ່າຕື່ນຕົກໃຈ
ເຮົາຈະຊ່ອຍໃຫ້ໄດ້ກັບຄືນມາຈາກປະເທດອັນໄກນັ້ນ
ຄືຈາກແຜ່ນດິນທີ່ພວກເຈົ້າຕົກເປັນນັກໂທດ
ເຊື້ອສາຍຂອງຢາໂຄບຈະກັບມາມີຊີວິດຢູ່ຢ່າງສະຫງົບສຸກ
ຈະປອດໄພ ແລະຈະບໍ່ມີໃຜເຮັດໃຫ້ພວກເຂົາຢ້ານກົວໄດ້
ເຮົາພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ແຫລະ.
11 ເຮົາຈະຢູ່ກັບເຈົ້າ ເພື່ອຊ່ອຍເຈົ້າໃຫ້ພົ້ນໄພ

ຈະທຳລາຍບັນດາປະເທດທີ່ເຮົາໃຫ້ເຈົ້າກະຈັດກະຈາຍໄປຢູ່ນັ້ນ
ຈະບໍ່ທຳລາຍເຈົ້າ ແຕ່ຈະລົງໂທດສະຖານເບົາເສຍກ່ອນ
ຈຶ່ງຈະປ່ອຍໄປ
ເຮົາພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ແຫລະ.”

12 ພຣະຜູ້ເປັນເຈົ້າຊົງກ່າວຕໍ່ປະຊາຊົນວ່າ,
“ບາດແຜຂອງເຈົ້າບໍ່ສາມາດປິ່ນປົວໃຫ້ດີໄດ້
ຄວາມເຈັບປວດກໍປິ່ນປົວບໍ່ໄດ້.
13 ຈະບໍ່ມີໃຜບົວລະບັດຮັກສາເຈົ້າ
ບໍ່ມີຢາຮັກສາບາດແຜ ແລະບໍ່ມີການປິ່ນປົວເຈົ້າ.
14 ຄົນຮັກແພງຂອງເຈົ້າທັງໝົດໄດ້ລືມເຈົ້າແລ້ວ
ພວກເຂົາບໍ່ສົນໃຈເຈົ້າອີກຕໍ່ໄປ
ເຮົາໂຈມຕີເຈົ້າເໝືອນດັ່ງສັດຕູ
ໂທດຂອງເຈົ້າກໍຮຸນແຮງ
ເພາະວ່າບາບຂອງເຈົ້າມີຫລາຍແທ້
ແລະຄວາມຊົ່ວກໍຮ້າຍແຮງ.
15 ຢ່າຮ້ອງໄຫ້ຍ້ອນຄວາມເຈັບປວດອີກເລີຍ
ຄວາມເຈັບປວດນັ້ນປິ່ນປົວໃຫ້ດີບໍ່ໄດ້ດອກ
ທີ່ເປັນດັ່ງນີ້ແມ່ນເຮົາລົງໂທດເຈົ້າ
ເພາະວ່າບາບຂອງເຈົ້າມີຫລາຍແທ້
ແລະຄວາມຊົ່ວກໍຮ້າຍແຮງ.
16 ຜູ້ໃດທຳຮ້າຍເຈົ້າ ຈະຖືກທຳຮ້າຍຕອບ
ສັດຕູຂອງເຈົ້າທັງໝົດຈະຕົກເປັນຊະເລີຍ
ຜູ້ໃດກົດຂີ່ຂົ່ມເຫັງເຈົ້າ ຈະໄດ້ຮັບການກົດຂີ່ຂົ່ມເຫັງຕອບ
ແລະຜູ້ໃດປຸ້ນເຈົ້າກໍຈະຖືກປຸ້ນຕອບ.
17 ເຮົາຈະເຮັດໃຫ້ເຈົ້າດີເປັນປົກກະຕິອີກ
ຈະປິ່ນປົວບາດແຜໃຫ້ດີ
ເຖິງແມ່ນສັດຕູຂອງເຈົ້າເວົ້າວ່າ
ເມືອງຊີໂອນຖືກເຂົາປະຖິ້ມແລ້ວ
ບໍ່ມີໃຜສົນໃຈມັນອີກ
ເຮົາພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ແຫລະ.”

18 ພຣະຜູ້ເປັນເຈົ້າຊົງກ່າວວ່າ,
“ເຮົາຈະເຮັດໃຫ້ເຊື້ອສາຍຂອງຢາໂຄບກັບຄືນສູ່ສະພາບເດີມ
ແລະຈະເອັນດູກູນາຄອບຄົວພວກເຂົາທັງໝົດ

ເມືອງທຸກເມືອງຈະຖືກສ້າງຂຶ້ນໃໝ່
ແລະເຮືອນທຸກຫລັງຈະເຮັດໃຫ້ຄືນດີຄືເກົ່າ.
19 ປະຊາຊົນໃນທີ່ນັ້ນຈະຮ້ອງເພງສັນລະເສີນ
ຈະຮ້ອງໂຮມ່ວນຊື່ນ
ເຮົາຈະເຮັດໃຫ້ພວກເຂົາເພີ່ມທະວີຫລາຍຂຶ້ນ
ແລະຈະນຳກຽດມາໃຫ້ພວກເຂົາ.
20 ເຮົາຈະນຳອຳນາດເກົ່າຄືນມາໃຫ້ຊົນຊາດນີ້
ຈະຈັດຕັ້ງພວກເຂົາຂຶ້ນອີກຢ່າງໝັ້ນຄົງ
ແລະຈະລົງໂທດຄົນທັງປວງທີ່ກົດຂີ່ຂົ່ມເຫັງເຂົາ.
21-22 ຜູ້ປົກຄອງຈະເປັນຊົນຊາດຂອງພວກເຂົາເອງ
ເມື່ອເຮົາເອີ້ນເອົາຜູ້ນັ້ນ ລາວຈະເຂົ້າມາໃກ້
ເພາະວ່າຈະບໍ່ມີໃຜກ້າມາ ຖ້າບໍ່ໄດ້ຍິນຄຳເອີ້ນ
ຊົນຊາດນີ້ຈະເປັນໄພ່ພົນຂອງເຮົາ
ແລະເຮົາຈະເປັນ ພຣະເຈົ້າ ຂອງເຂົາ
ເຮົາ ພຣະຜູ້ເປັນເຈົ້າ ໄດ້ກ່າວດັ່ງນີ້ແຫລະ.”

23-24 ຄວາມຄຽດຮ້າຍຂອງ ພຣະຜູ້ເປັນເຈົ້າ ເປັນດັ່ງລົມພະຍຸ ລົມໂຫດຮ້າຍນີ້ຈະພັດເປົ່າວົນ-
ວຽນຢູ່ເທິງຫົວຂອງຄົນຊົ່ວຊ້າ ຄວາມຄຽດຮ້າຍນີ້ຈະບໍ່ຢຸດຢັ້ງ ຈະມີເລື້ອຍໆ ໄປຈົນເທົ່າພຣະອົງ
ໄດ້ຊົງກະທຳສຳເລັດຕາມພຣະປະສົງແລ້ວ ໃນວາລະສຸດທ້າຍ ໄພ່ພົນຂອງພຣະອົງຈະເຂົ້າໃຈ
ເລື່ອງນີ້ຢ່າງແຈ່ມແຈ້ງ.

# ບົດທີ 31

## ຄົນອິສຣາເອນຈະກັບຄືນປະເທດຂອງຕົນ

1 ພຣະຜູ້ເປັນເຈົ້າຊົງກ່າວວ່າ,
“ເມື່ອເວລານັ້ນມາເຖິງ ເຮົາຈະເປັນ ພຣະເຈົ້າ ແຫ່ງຕະກູນທັງປວງຂອງ ອິສຣາເອນ
ພວກເຂົາຈະເປັນໄພ່ພົນຂອງເຮົາ.

2-3 ເມື່ອປະຊາຊົນ ອິສຣາເອນ ທີ່ເຫລືອຕາຍມາຈາກຖິ່ນແຫ້ງແລ້ງກັນດານຕ້ອງພັກຜ່ອນ ເຮົາ
ກໍໄດ້ສະແດງຄວາມເມດຕາແລະປະກົດໃຫ້ພວກເຂົາເຫັນ ຊາວ ອິສຣາເອນ ເອີຍ ເຮົາໄດ້ຮັກ-
ແພງພວກເຈົ້າສະເໝີມາ ດັ່ງນັ້ນ ເຮົາຈະຮັກແພງພວກເຈົ້າຢ່າງໝັ້ນຄົງສືບຕໍ່ໄປ. 4 ເຮົາຈະສ້າງ
ເຈົ້າຂຶ້ນໃໝ່ ເຈົ້າຈະມີກອງໂທນ ແລະໄດ້ຟ້ອນລຳດ້ວຍຄວາມມ່ວນຊື່ນ ຈະໄດ້ປູກຕົ້ນອະງຸ່ນ
ເທິງພູຊາມາເຣຍອີກ. 5 ແລະຄົນທັງຫລາຍທີ່ປູກຕົ້ນອະງຸ່ນນັ້ນຈະໄດ້ກິນໝາກຂອງມັນ. 6 ເມື່ອ
ເວລານັ້ນມາເຖິງ ຄົນເຝົ້າຍາມຈະເອີ້ນຢູ່ເທິງພູເອຟຣາຢິມວ່າ ມາເທາະ ເຮົາຈົ່ງພ້ອມກັນຂຶ້ນໄປ
ເທິງພູຊີໂອນເທາະ ໄປເຝົ້າພຣະຜູ້ເປັນເຈົ້າຂອງເຮົາ.”

7 ພຣະຜູ້ເປັນເຈົ້າຊົງກ່າວວ່າ,

"ຈົ່ງຮ້ອງເພງສັນລະເສີນດ້ວຍຄວາມມ່ວນຊື່ນສຳລັບ ອິສຣາເອນ
ທີ່ເປັນຊົນຊາດໃຫຍ່
ພຣະຜູ້ເປັນເຈົ້າ ຊົງຊ່ອຍໄພ່ພົນຂອງພຣະອົງໃຫ້ພົ້ນໄພ
ຊົງຊ່ອຍຄົນທັງປວງທີ່ເຫລືອຢູ່.
8 ເຮົາຈະໂຮມເອົາພວກເຂົາມາຈາກທາງເໜືອ
ແລະມາຈາກທົ່ວໂລກ
ພ້ອມທັງຄົນຕາບອດ ແລະຄົນເສຍຂາ
ຜູ້ຍິງຖືພາທີ່ກຳລັງຈະອອກລູກກໍຈະມາ
ຈະກັບຄືນມາເປັນຊົນຊາດໃຫຍ່.
9 ໄພ່ພົນຂອງເຮົາຈະກັບມາດ້ວຍນໍ້າຕາ
ແຕ່ເຮົາຈະເລົ້າໂລມ ແລະເບິ່ງແຍງພວກເຂົາ
ຈະນຳພວກເຂົາມາຮອດກະແສນໍ້າໄຫລ
ໃຫ້ຍ່າງໄປຕາມທາງພຽງບ່ອນບໍ່ມີສະດຸດ
ເຮົາເປັນພໍ່ຂອງ ອິສຣາເອນ
ແລະ ເອຟຣາຢິມ ເປັນລູກກົກຂອງເຮົາ.
10 ຊົນຊາດທັງຫລາຍເອີຍ ຈົ່ງຟັງເດີ້
ຈົ່ງປະກາດຖ້ອຍຄຳຂອງເຮົາໃນແຜ່ນດິນແຄມທະເລທີ່ຢູ່ຫ່າງໄກ
ເຮົາຜູ້ເຮັດໃຫ້ອິສຣາເອນກະຈັດກະຈາຍໄປ
ຈະເຕົ້າໂຮມແລະເບິ່ງແຍງພວກເຂົາ
ເໝືອນຄົນລ້ຽງແກະເບິ່ງແຍງແກະຂອງຕົນ.
11 ເຮົາໄດ້ຊ່ອຍໃຫ້ອິສຣາເອນ ເປັນອິດສະຫລະ
ແລະໃຫ້ພົ້ນຈາກເງື້ອມມືຂອງຊົນຊາດໃຫຍ່.
12 ພວກເຂົາຈະມາຮ້ອງເພງດ້ວຍຄວາມມ່ວນຊື່ນຢູ່ເທິງພູຊີໂອນ
ຈະຊົມຊື່ນຍິນດີໃນສິ່ງຂອງທີ່ເຮົາໃຫ້
ຄືເມັດເຂົ້າ ເຫລົ້າອະງຸ່ນ ນໍ້າມັນ
ຝູງແກະ ແລະງົວຄວາຍ
ພວກເຂົາຈະເປັນເໝືອນສວນທີ່ມີນໍ້າຫົດ
ແລະຈະບໍ່ມີຄວາມໂສກເສົ້າເສຍໃຈອີກເລີຍ.
13 ຂະນະນັ້ນພວກຍິງສາວຈະຟ້ອນລຳຢ່າງມີຄວາມສຸກ
ພວກຄົນໜຸ່ມ ແລະຄົນເຖົ້າຈະມ່ວນຊື່ນຍິນດີ
ເຮົາຈະເລົ້າໂລມເຂົາ ແລະປ່ຽນຄວາມໂສກເສົ້າເປັນຄວາມມ່ວນຊື່ນ
ຄວາມເສຍໃຈຈະກາຍເປັນຄວາມຍິນດີ.
14 ຈະເຮັດໃຫ້ປະໂລຫິດມີອາຫານກິນຢ່າງສົມບູນ

ແລະຈະໃຫ້ປະຊາຊົນຂອງເຮົາມີທຸກຢ່າງຕາມຄວາມຕ້ອງການ
ເຮົາພຣະຜູ້ເປັນເຈົ້າ ໄດ້ກ່າວດັ່ງນີ້ແຫລະ.”

## ພຣະຜູ້ເປັນເຈົ້າຊົງເມດຕາອິສຣາເອນ

15 ພຣະຜູ້ເປັນເຈົ້າ ຊົງກ່າວວ່າ,
“ສຽງທີ່ໄດ້ຍິນຢູ່ໃນເມືອງ ຣາມາ ນັ້ນ
ເປັນສຽງຮ້ອງໄຫ້ດ້ວຍຄວາມຂົມຂື່ນ
ນາງ ຣາເຄນ ຮ້ອງໄຫ້ຍ້ອນລູກຂອງຕົນ
ນາງບໍ່ຍອມຟັງສຽງເລົ້າໂລມ
ຍ້ອນວ່າລູກຂອງນາງໄດ້ຕາຍແລ້ວ.
16 ເຈົ້າຈົ່ງເຊົາຮ້ອງໄຫ້ ແລະເຊັດນໍ້າຕາເສຍ
ເພາະວ່າຈະມີບໍາເໜັດສໍາລັບຜົນງານທີ່ເຈົ້າໄດ້ເຮັດ
ເພື່ອລູກຂອງເຈົ້າ
ພວກເຂົາທັງຫລາຍຈະໄດ້ກັບມາຈາກແຜ່ນດິນຂອງສັດຕູ
ເຮົາພຣະຜູ້ເປັນເຈົ້າ ໄດ້ກ່າວດັ່ງນີ້ແຫລະ.
17 ຄວາມຫວັງຂອງເຈົ້າຍັງມີຢູ່
ເພາະວ່າລູກຫລານຂອງເຈົ້າຈະໄດ້ກັບມາອີກ
ເຮົາພຣະຜູ້ເປັນເຈົ້າ ໄດ້ກ່າວດັ່ງນີ້ແຫລະ.
18 ເຮົາໄດ້ຍິນຊາວ ອິສຣາເອນ ເວົ້າດ້ວຍຄວາມທຸກໃຈວ່າ
ຂ້າແດ່ ພຣະຜູ້ເປັນເຈົ້າ ພວກຂ້ານ້ອຍເປັນເໝືອນງົວປ່າທີ່ດື້ດ້ານ
ແຕ່ພຣະອົງຊົງສອນພວກຂ້ານ້ອຍໃຫ້ເຊື່ອຟັງ
ຂໍຊົງ ໂຜດໃຫ້ພວກຂ້ານ້ອຍກັບຄືນທ້ອນ
ພຣະອົງຊົງເປັນ ພຣະຜູ້ເປັນເຈົ້າ ຂອງພວກຂ້ານ້ອຍ.
19 ພວກຂ້ານ້ອຍໄດ້ຫລີກໜີຈາກພຣະອົງ
ແຕ່ບໍ່ເຖິງພວກຂ້ານ້ອຍກໍຢາກກັບຄືນອີກ
ຫລັງຈາກທີ່ພຣະອົງຊົງລົງໂທດແລ້ວ
ພວກຂ້ານ້ອຍກໍຕີຕົນເອງດ້ວຍຄວາມເສຍໃຈ
ແລະຮູ້ສຶກອັບອາຍຂາຍໜ້າ
ເພາະວ່າໄດ້ເຮັດບາບເມື່ອຄາວຍັງໜຸ່ມ.
20 ຊາວ ອິສຣາເອນ ເອີຍ ພວກເຈົ້າເປັນລູກທີ່ຮັກຍິ່ງຂອງເຮົາ
ເມື່ອໃດເຮົາກ່າວເຖິງຊື່ຂອງພວກເຈົ້າ
ເຮົາກໍຄິດເຖິງດ້ວຍຄວາມຮັກແພງ
ຈິດໃຈຂອງເຮົາຄິດເຖິງແຕ່ພວກເຈົ້າ
ເຮົາຈະເມດຕາສົງສານພວກເຈົ້າ

ເຮົາພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ແຫລະ.
21 ຈົ່ງໝາຍທາງທີ່ພວກເຈົ້າຈາກໄປນັ້ນ
ຊາວອິສຣາເອນເອີຍ ຈົ່ງກັບຄືນມາບ້ານເມືອງທີ່ໄດ້ຈາກໄປ.
22 ລູກທີ່ບໍ່ສັດຊື່ເອີຍ ຈະຍັງລັງເລໃຈຢູ່ອີກເທິງປານໃດ?
ເຮົາພຣະຜູ້ເປັນເຈົ້າໄດ້ສ້າງແນວໃໝ່ຂຶ້ນມາແລ້ວ
ຄືຜູ້ຍິງທີ່ອ່ອນແອຈະແຂງແຮງເໝືອນຜູ້ຊາຍ.”

## ພຣະເຈົ້າຈະຊົງໂຜດໃຫ້ໄພ່ພົນຂອງພຣະອົງອຸດົມສົມບູນໃນອະນາຄົດ

23ພຣະຜູ້ເປັນເຈົ້າອົງມີອຳນາດຍິ່ງໃຫຍ່ ຂອງອິສຣາເອນຊົງກ່າວວ່າ, “ເມື່ອເຮົາເຮັດໃຫ້ປະ-
ຊາຊົນກັບຄືນດີຄືເກົ່າແລ້ວ ພວກເຂົາຈະກ່າວໃນປະເທດຢູດາ ແລະໃນຫົວເມືອງຕ່າງໆ ອີກເທື່ອ
ໜຶ່ງວ່າ,

ຂໍພຣະຜູ້ເປັນເຈົ້າຊົງອວຍພຣະພອນໃຫ້ພູໃນນະຄອນເຢຣູຊາເລັມ
ຄືບ່ອນສັກສິດທີ່ພຣະອົງຊົງປະທັບຢູ່ນັ້ນ.

24ຊາວນາ ຄົນລ້ຽງສັດ ພ້ອມກັບສັດທັງໝົດຈະອາໄສຢູ່ໃນປະເທດຢູດາ ແລະຫົວເມືອງ
ຕ່າງໆ. 25ເຮົາຈະເຮັດໃຫ້ຜູ້ອິດເມື່ອຍມີແຮງຂຶ້ນ ໃຫ້ຜູ້ອຶດຢາກມີອາຫານການກິນຢ່າງສົມບູນ.
26ເມື່ອນັ້ນ ປະຊາຊົນຈະເວົ້າວ່າ ຂ້າພະເຈົ້າໄດ້ນອນ ແລະຕື່ນຂຶ້ນດ້ວຍຄວາມຊື່ນບານ.

27ເຮົາ ພຣະຜູ້ເປັນເຈົ້າກ່າວວ່າ ເມື່ອເວລານັ້ນມາເຖິງ ເຮົາຈະເຮັດໃຫ້ປະເທດອິສຣາເອນ
ແລະຢູດາເຕັມໄປດ້ວຍຄົນ ແລະສັດທັງຫລາຍ. 28ແຕ່ກ່ອນ ເຮົາໄດ້ເຝົ້າເບິ່ງເພື່ອທຳລາຍພວກ
ເຂົາ ຄືເພື່ອຖອນອອກ ເພື່ອເຮັດໃຫ້ລົ້ມລົງ ແລະນຳເຫດຮ້າຍມາສັນໃດ ດັ່ງນັ້ນ ເຮົາຈຶ່ງຈະເຝົ້າ
ເບິ່ງພວກເຂົາເພື່ອປູກຝັງ ແລະສ້າງຂຶ້ນສັນນັ້ນ ເຮົາພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ແຫລະ.

29ເມື່ອເວລານັ້ນມາເຖິງ ປະຊາຊົນຈະບໍ່ກ່າວຕໍ່ໄປອີກວ່າ,

ພໍ່ກິນໝາກອະງຸ່ນດິບ
ແຕ່ລູກຊໍ້າພັດເຂັດແຂ້ວ.

30ແຕ່ວ່າໃຜກໍຕາມທີ່ກິນໝາກອະງຸ່ນດິບຈະຕ້ອງເຂັດແຂ້ວ ແລະທຸກຄົນທີ່ເຮັດບາບ ຈະຕ້ອງ
ຕາຍຍ້ອນບາບນັ້ນ.”

31ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ເມື່ອວັນເວລານັ້ນມາເຖິງ ເຮົາຈະໃຫ້ຄຳໝັ້ນສັນຍາໃໝ່ແກ່
ປະຊາຊົນອິສຣາເອນ ແລະຢູດາ. 32ຄຳໝັ້ນສັນຍານີ້ຈະບໍ່ເໝືອນທີ່ເຮົາໄດ້ໃຫ້ບັນພະບູລຸດຂອງ
ພວກເຂົາຕອນຈູງມືເຂົາອອກຈາກເອຢິບນັ້ນ ເຖິງແມ່ນເຮົາເປັນພຣະຜູ້ເປັນເຈົ້າຂອງເຂົາ
ພວກເຂົາກໍບໍ່ສັດຊື່ຕໍ່ຄຳໝັ້ນສັນຍາທີ່ເຮົາໄດ້ໃຫ້ ເຮົາ ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ແຫລະ.
33ເມື່ອເວລານັ້ນມາເຖິງ ເຮົາຈະໃຫ້ຄຳໝັ້ນສັນຍາແກ່ປະຊາຊົນອິສຣາເອນດັ່ງນີ້ ຄືຈະບັນຈຸ
ພຣະທຳຂອງເຮົາໄວ້ໃນຈິດໃຈຂອງພວກເຂົາ ເຮົາຈະເປັນພຣະເຈົ້າຂອງເຂົາ ແລະພວກເຂົາຈະ
ເປັນໄພ່ພົນຂອງເຮົາ ເຮົາພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ແຫລະ.

34ຕໍ່ໄປຈະບໍ່ມີໃຜໃນພວກເຂົາສອນເພື່ອນບ້ານ ແລະພີ່ນ້ອງຂອງຕົນວ່າ ຈົ່ງຮູ້ຈັກພຣະຜູ້-
ເປັນເຈົ້າ ເພາະວ່າພວກເຂົາທັງໝົດຕັ້ງແຕ່ຜູ້ນ້ອຍທີ່ສຸດເຖິງຜູ້ໃຫຍ່ທີ່ສຸດຈະຮູ້ຈັກເຮົາ ເຮົາຈະ

ໃຫ້ອະໄພບາບແກ່ເຂົາ ແລະຈະບໍ່ຈົດຈຳຄວາມຜິດຂອງເຂົາອີກຕໍ່ໄປ ເຮົາ ພຣະຜູ້ເປັນເຈົ້າໄດ້
ກ່າວດັ່ງນີ້ແຫລະ.”

35 ພຣະຜູ້ເປັນເຈົ້າຊົງໃຫ້ດວງອາທິດສ່ອງແສງໃນກາງເວັນ
ແລະຊົງໃຫ້ເດືອນດາວສ່ອງແສງໃນກາງຄືນ
ຊົງກວນໃຫ້ທະເລມີຄື້ນດັງສະເທືອນ
ພຣະນາມຂອງພຣະອົງຄືພຣະຜູ້ເປັນເຈົ້າອົງຍິ່ງໃຫຍ່.
36 ພຣະອົງຊົງສັນຍາວ່າ ຕາບໃດທີ່ໂລກນີ້ຍັງບໍ່ສູນສິ້ນໄປ
ຕາບນັ້ນຊົນຊາດອິສຣາເອນກໍຈະຍັງຢູ່.
37 ຖ້າວັດແທກຟ້າເບື້ອງເທິງ
ແລະສຳຫລວດຮາກຖານໂລກເບື້ອງລຸ່ມໄດ້
ພຣະອົງຈຶ່ງຈະປະຖິ້ມປະຊາຊົນອິສຣາເອນ
ຍ້ອນຄວາມຊົ່ວທັງປວງຂອງພວກເຂົາ
ພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ແຫລະ.

38ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ເມື່ອວັນເວລານັ້ນມາເຖິງ ເມືອງນີ້ທັງໝົດຕັ້ງແຕ່ຫໍຄອຍຮາ-
ນາເນນ ເຖິງປະຕູແຈຈະຖືກສ້າງຂຶ້ນໃໝ່. 39ເສັ້ນເຂດແດນຈະຍາວໄປເຖິງພູ ກາເຣບ ແລ້ວ
ຈະລ້ຽງໄປເຖິງໂກອາ ເຖິງຮ່ອມພູບ່ອນຝັງຊາກສົບກັບຂີ້ເທົ່າໄຟ. 40ແລະທົ່ງນາທັງໝົດຕາມລຳ
ນ້ຳກິດໂຣນ ຈົນເຖິງປະຕູມ້າໄປທາງຕາເວັນອອກ ຈະເປັນບ່ອນສັກສິດສຳລັບເຮົາ ເມືອງນີ້ຈະ
ບໍ່ຖືກຖອນຮາກ ຫລືທຳລາຍອີກຕໍ່ໄປ.”

# ບົດທີ 32

## ເຢເຣມີຢາຊື້ນາບ່ອນໜຶ່ງ

1ພຣະຄຳຊຶ່ງມາຈາກພຣະຜູ້ເປັນເຈົ້າເຖິງເຢເຣມີຢາໃນປີທີ່ສິບແຫ່ງເຊເດກີຢາກະສັດຂອງ
ຢູດາ ຊຶ່ງເປັນປີທີ່ສິບແປດຂອງເນບູກາດເນັດຊາ
2ເທື່ອນັ້ນ ກອງທັບຂອງກະສັດແຫ່ງບາບີໂລນກຳລັງອ້ອມກຸງເຢຣູຊາເລັມຢູ່ ແລະເຢເຣມີ-
ຢາຜູ້ປະກາດພຣະທຳຖືກຂັງຢູ່ໃນບໍລິເວນທະຫານຮັກສາພະອົງ ຊຶ່ງຢູ່ໃນພະລາຊະວັງຂອງກະ-
ສັດແຫ່ງຢູດາ 3ເພາະເຊເດກີຢາກະສັດແຫ່ງຢູດາໄດ້ຂັງເພິ່ນໄວ້ ໂດຍກ່າວວ່າ “ເປັນຫຍັງທ່ານ
ຈຶ່ງປະກາດພຣະທຳ ແລະກ່າວວ່າ ‘ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເບິ່ງແມ ເຮົາຈະມອບເມືອງນີ້
ໄວ້ໃນມືຂອງກະສັດແຫ່ງບາບີໂລນ ແລະລາວຈະຍຶດເມືອງນີ້ 4ເຊເດກີຢາກະສັດແຫ່ງຢູດາຈະ
ໜີໄປບໍ່ພົ້ນຈາກມືຂອງຄົນບາບີໂລນ ແຕ່ຈະຖືກມອບໄວ້ໃນມືຂອງກະສັດແຫ່ງບາບີໂລນ ແລະ
ຈະໄດ້ເວົ້າກັນປາກຕໍ່ປາກ ທັງຈະແນມເຫັນຕາຕໍ່ຕາ 5ແລະລາວຈະນຳເຊເດກີຢາໄປຍັງບາບີ-
ໂລນ ແລະລາວຈະຢູ່ບ່ອນນັ້ນຈົນກວ່າເຮົາຈະໄປຢ້ຽມລາວ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ
ເຖິງແມ່ນເຈົ້າຈະຕໍ່ສູ້ກັບຊາວບາບີໂລນ ເຈົ້າກໍຈະບໍ່ຈະເລີນ’”
6ເຢເຣມີຢາທູນວ່າ “ພຣະທຳຂອງພຣະຜູ້ເປັນເຈົ້າມາຍັງຂ້າພະອົງວ່າ 7ເບິ່ງແມ ຮານາເມນ

ລູກຊາຍ ຊານລູມ ອາຂອງເຈົ້າຈະມາຫາເຈົ້າ ແລະກ່າວວ່າ ‘ຈົ່ງຊື້ນາຂອງຂ້າພະເຈົ້າຊຶ່ງຢູ່ທີ່ອາ-
ນາໂທດ ເພາະວ່າສິດທິຂອງການໄຖ່ດ້ວຍການຊື້ນັ້ນເປັນຂອງເຈົ້າ’ 8ແລ້ວຮານາເມນ ລູກຊາຍ
ຂອງ ຊານລູມ ອາມາຫາຂ້າພະເຈົ້າທີ່ບໍລິເວນຂອງທະຫານຮັກສາພະອົງ ຖືກຕ້ອງຕາມພຣະທຳ
ຂອງພຣະຜູ້ເປັນເຈົ້າ ແລະເວົ້າກັບຂ້າພະເຈົ້າວ່າ ‘ຈົ່ງຊື້ນາຂອງຂ້າພະເຈົ້າ ຊຶ່ງຢູ່ທີ່ອານາໂທດ
ໃນແຜ່ນດິນເບັນຢາມິນ ເພາະສິດທິຂອງການຖືກຳມະສິດ ແລະການໄຖ່ເປັນຂອງທ່ານ ຈົ່ງຊື້
ໄວ້ສາ’ ແລ້ວຂ້າພະອົງຈຶ່ງຮູ້ວ່ານີ້ເປັນພຣະທຳຂອງພຣະຜູ້ເປັນເຈົ້າ 9ແລະຂ້າພະເຈົ້າກໍຊື້ນາທີ່
ອານາໂທດ ຈາກ ຮານາເມນ ລູກຂອງອາວຂອງຂ້າພະເຈົ້າ ແລະໄດ້ຊັ່ງເງິນໃຫ້ແກ່ລາວ ຄືເງິນ
ສິບເຈັດເຊເຂ 10ຂ້າພະເຈົ້າກໍລົງນາມໃນໜັງສືປະທັບຕາໄວ້ ໄດ້ພະຍານ ແລະເອົາຕາຊັ່ງຊັ່ງ
ເງິນ 11ແລ້ວຂ້າພະເຈົ້າກໍຮັບໜັງສືຂອງການຊື້ທັງສະບັບທີ່ປະທັບຕາແລ້ວຕາມກົດໝາຍ ແລະ
ທຳນຽມ ກັບສະບັບທີ່ເປີດຢູ່ 12ແລະຂ້າພະເຈົ້າກໍມອບໜັງສືຂອງການຊື້ໃຫ້ແກ່ບາຣຸກ ລູກຊາຍ
ເນຣີຢາ ຜູ້ເປັນລູກຊາຍຂອງ ມາເຊຢາ ຕໍ່ໜ້າ ຮານາເມນ ລູກຂອງອາວຂອງຂ້າພະເຈົ້າ ໃນ
ສາຍຕາຂອງພະຍານຜູ້ທີ່ລົງນາມໃນໜັງສືການຊື້ ແລະຕໍ່ໜ້າບັນດາຊາວຢິວ ຜູ້ຊຶ່ງນັ່ງຢູ່ໃນບໍລິ-
ເວນ ທະຫານ ຮັກສາ ພະ ອົງ 13ຂ້າພະ ເຈົ້າ ກໍ ກ່າວ ເນັ້ນ ບາຣຸກ ຕໍ່ໜ້າ ພວກ ເຂົາ ທັງຫລາຍ ວ່າ
14‘ພຣະຜູ້ເປັນເຈົ້າ ຈອມໂຍທາ ພຣະເຈົ້າ ແຫ່ງ ອິສຣາເອນ ກ່າວດັ່ງນີ້ວ່າ ຈົ່ງເອົາໜັງສືເຫລົ່ານີ້
ໄປເສຍ ທັງໜັງສືຂອງການຊື້ທີ່ປະທັບຕາ ກັບສະບັບທີ່ເປີດນີ້ ແລະບັນຈຸໄວ້ໃນພາຊະນະດິນ
ເພື່ອຈະທົນຢູ່ໄດ້ຫລາຍວັນ 15ເພາະ ພຣະຜູ້ເປັນເຈົ້າ ຈອມໂຍທາ ພຣະເຈົ້າ ແຫ່ງ ອິສຣາເອນ
ກ່າວດັ່ງນີ້ວ່າ ບ້ານເຮືອນ ແລະໄຮ່ນາ ກັບສວນອະງຸ່ນຈະມີການຖືກຳມະສິດກັນອີກໃນແຜ່ນດິນ
ນີ້’

## ເຢເຣມີຢາເຊື່ອວ່າອິສຣາເອນຈະກັບມາສູ່ສະພາບເດີມ

16ຫລັງຈາກທີ່ຂ້າພະເຈົ້າມອບໜັງສືການຊື້ໃຫ້ແກ່ບາຣຸກ ລູກຊາຍ ເນຣີຢາ ແລ້ວ ຂ້າພະເຈົ້າ
ໄດ້ອະທິຖານຕໍ່ ພຣະຜູ້ເປັນເຈົ້າ ວ່າ 17‘ຂ້າແດ່ອົງ ພຣະຜູ້ເປັນເຈົ້າ ເບິ່ງແມ ແມ່ນພຣະອົງເອງ
ຜູ້ໄດ້ຊົງສ້າງຟ້າສະຫວັນ ແລະ ແຜ່ນດິນໂລກ ດ້ວຍລິດທານຸພາບອັນຍິ່ງໃຫຍ່ຂອງພຣະອົງ
ແລະດ້ວຍພຣະຫັດຊຶ່ງຢຽດອອກຂອງພຣະອົງ ສຳລັບພຣະອົງບໍ່ມີສິ່ງໃດທີ່ຍາກເກີນ 18ຜູ້ຊົງສະ-
ແດງຄວາມເມດຕາຕໍ່ຄົນ ເປັນພັນໆ ແຕ່ຊົງຕອບສະໜອງຄວາມຊົ່ວຊ້າຂອງພໍ່ໃຫ້ຕົກເຖິງລູກ
ຫລານສືບຕໍ່ມາ ຂ້າແດ່ພຣະເຈົ້າຜູ້ຍິ່ງໃຫຍ່ ແລະຊົງລິດ ພຣະນາມຂອງພຣະອົງຄື ພຣະຜູ້ເປັນ-
ເຈົ້າ ຈອມໂຍທາ 19ພຣະອົງຊົງເປັນໃຫຍ່ໃນການໃຫ້ຄຳປຶກສາ ຊົງລິດທານຸພາບໃນພະລາຊະ
ກິດ ພຣະເນດຂອງພຣະອົງເຫັນທຸກການດຳເນີນຊີວິດຂອງບຸດທັງຫລາຍຂອງມະນຸດ ຊົງປະ-
ທານລາງວັນແກ່ທຸກຄົນຕາມການປະພຶດແລະການກະທຳຂອງພວກເຂົາ 20ຊົງເປັນຜູ້ສະແດງ
ໝາຍສຳຄັນ ແລະການອັດສະຈັນໃນແຜ່ນດິນ ເອຢິບ ແລະຈົນເຖິງສະໄໝນີ້ ກໍຊົງສະແດງໃນ
ອິສຣາເອນ ແລະທ່າມກາງຊຸມນຸມຊົນ ແລະຊົງເຮັດໃຫ້ພຣະນາມຊ່າລືໄປຢ່າງທຸກມື້ນີ້ 21ພຣະ-
ອົງໄດ້ຊົງນຳ ອິສຣາເອນ ປະຊາຊົນຂອງພຣະອົງອອກຈາກ ແຜ່ນດິນ ເອຢິບ ດ້ວຍໝາຍສຳຄັນ
ແລະການອັດສະຈັນ ແລະດ້ວຍພຣະຫັດເຂັ້ມແຂງ ແລະພຣະຫັດທີ່ຢຽດອອກດ້ວຍໜ້າຢ້ານກົວ
22ແລະພຣະອົງຊົງປະທານ ແຜ່ນດິນນີ້ແກ່ພວກເຂົາ ຊຶ່ງພຣະອົງຊົງປະຕິຍານ ແກ່ບັນພະບູລຸດ

ຂອງເຂົາທັງຫລາຍວ່າຈະປະທານແກ່ພວກເຂົາ ຄືແຜ່ນດິນ ຊຶ່ງມີນ້ຳນົມ ແລະນ້ຳເຜິ້ງໄຫລບໍລິ-
ບູນ [23]ພວກເຂົາກໍໄດ້ເຂົ້າໄປ ແລະຖືກຳມະສິດແຜ່ນດິນນັ້ນ ແຕ່ບໍ່ໄດ້ເຊື່ອຟັງພຣະສຸລະສຽງ
ຂອງພຣະອົງ ຫລືດຳເນີນຕາມພຣະບັນຍັດຂອງພຣະອົງ ສິ່ງທັງປວງຊຶ່ງພຣະອົງຊົງບັນຊາໃຫ້
ເຮັດນັ້ນ ພວກເຂົາບໍ່ໄດ້ເຮັດເລີຍ ເພາະສະນັ້ນ ພຣະອົງຈຶ່ງຊົງເຮັດໃຫ້ເຫດຮ້າຍທັງໝົດນີ້ມາ
ເຖິງພວກເຂົາ [24]ເບິ່ງແມ ກອງດິນທີ່ອ້ອມຢູ່ໄດ້ມາເຖິງກຸງເພື່ອຈະຍຶດເອົາແລ້ວ ແລະເພາະເຫດ
ດ້ວຍດາບ ການອຶດຫິວອາຫານ ແລະພະຍາດລະບາດ ເມືອງນີ້ກໍໄດ້ຖືກມອບໄວ້ໃນມືຂອງຄົນ
ບາບີໂລນຜູ້ກຳລັງຕໍ່ສູ້ຢູ່ນັ້ນ ພຣະອົງກ່າວສິ່ງໃດກໍເປັນໄປຢ່າງນັ້ນແລ້ວ ແລະເບິ່ງແມ ພຣະອົງ
ຊົງທອດພຣະເນດເຫັນ [25]ຂ້າແດ່ອົງພຣະຜູ້ເປັນເຈົ້າ ພຣະອົງຍັງກ່າວແກ່ຂ້າພະອົງວ່າ "ຈົ່ງ
ເອົາເງິນຊື້ນາ ແລະຫາພະຍານເສຍ" ເຖິງແມ່ນວ່າເມືອງນັ້ນຈະຖືກມອບໄວ້ໃນມືຂອງຄົນບາບີ-
ໂລນ'"

[26]ພຣະທຳຂອງພຣະຜູ້ເປັນເຈົ້າມາຍັງເຢເຣມີຢາວ່າ [27]"ເບິ່ງແມ ເຮົາຄືພຣະຜູ້ເປັນເຈົ້າ
ພຣະເຈົ້າຂອງບັນດາມະນຸດຊາດທັງໝົດ ສຳລັບເຮົາມີສິ່ງໃດທີ່ຍາກເກີນໄປບໍ [28]ເພາະສະນັ້ນ
ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເບິ່ງແມ ເຮົາຈະມອບເມືອງນີ້ໄວ້ໃນມືຂອງຊາວບາບີໂລນ ແລະ
ໃນມືຂອງເນບູກາດເນັດຊາ ກະສັດແຫ່ງບາບີໂລນ ແລະລາວຈະຍຶດເອົາແນ່ນອນ [29]ຊາວບາ-
ບີໂລນຜູ້ຕໍ່ສູ້ກັບເມືອງນີ້ ຈະມາເຜົາເມືອງນີ້ເສຍດ້ວຍໄຟໃຫ້ໄໝ້ໝົດ ທັງບັນດາເຮືອນທີ່ພວກ
ເຂົາເຜົາເຄື່ອງຖວາຍພະບາອານຢູ່ເທິງຫລັງຄາ ແລະຖອກເຄື່ອງດື່ມບູຊາຖວາຍແກ່ພະອື່ນ
ເພື່ອຍົວະເຍົ້າເຮົາໃຫ້ໂກດຮ້າຍ [30]ເພາະປະຊາຊົນຂອງອິສຣາເອນ ແລະປະຊາຊົນຂອງຢູດາບໍ່
ໄດ້ເຮັດຫຍັງເລີຍ ນອກຈາກຄວາມຊົ່ວຕໍ່ໜ້າຕໍ່ຕາຂອງເຮົາຕັ້ງແຕ່ໜຸ່ມມາ ພຣະຜູ້ເປັນເຈົ້າກ່າວ
ວ່າ ປະຊາຊົນອິສຣາເອນບໍ່ໄດ້ເຮັດຫຍັງເລີຍ ນອກຈາກຍົວະເຍົ້າເຮົາໃຫ້ໂກດຮ້າຍດ້ວຍຜົນ-
ງານແຫ່ງມືຂອງຕົນ [31]ເມືອງນີ້ໄດ້ຍົວະເຍົ້າຄວາມໂກດຮ້າຍ ແລະຄວາມພິໂລດຂອງເຮົາ ຕັ້ງ-
ແຕ່ມື້ທີ່ໄດ້ສ້າງມັນຂຶ້ນມາຈົນເຖິງມື້ນີ້ ເພາະສະນັ້ນ ເຮົາຈະຖອນອອກໄປເສຍຈາກໜ້າຂອງເຮົາ
[32]ເພາະວ່າຄວາມຊົ່ວທັງໝົດຂອງປະຊາຊົນອິສຣາເອນ ແລະປະຊາຊົນຢູດາຊຶ່ງພວກເຂົາໄດ້
ເຮັດໃຫ້ຍາກຮ້າຍ ຄືທັງຕົວເຂົາ ບັນດາກະສັດ ແລະເຈົ້ານາຍຂອງພວກເຂົາ ບັນດາປະໂລຫິດ
ແລະຜູ້ປະກາດພຣະທຳຂອງເຂົາ ຄົນຢູດາ ແລະຊາວກຸງເຢຣູຊາເລັມ [33]ພວກເຂົາທັງຫລາຍ
ໄດ້ຫັນຫລັງໃຫ້ເຮົາ ບໍ່ແມ່ນຫັນໜ້າ ເຖິງວ່າເຮົາໄດ້ສອນພວກເຂົາຢູ່ຢ່າງບໍ່ຢຸດຢັ້ງ ພວກເຂົາກໍບໍ່
ໄດ້ຟັງທີ່ຈະຮັບຄຳສັ່ງສອນຂອງເຮົາ [34]ແຕ່ໄດ້ຕັ້ງສິ່ງທີ່ໜ້າກຽດຊັງຂອງຕົນໄວ້ໃນພຣະນິເວດ
ຊຶ່ງເອີ້ນຕາມນາມຂອງເຮົາ ອັນເຮັດໃຫ້ມີມົນທິນ [35]ພວກເຂົາໄດ້ສ້າງແທ່ນບູຊາອັນສູງສຳລັບ
ພະບາອານໃນພູເຂົາແຫ່ງລູກຊາຍຂອງຮິນໂນມ ເພື່ອຖວາຍລູກຊາຍ ແລະລູກສາວຂອງຕົນ
ແກ່ພະໂມເລັກ ໂດຍໃຫ້ລຸຍໄຟ ເຖິງວ່າເຮົາບໍ່ໄດ້ບັນຊາພວກເຂົາ ຫລືມີຢູ່ໃນຈິດໃຈຂອງເຮົາວ່າ
ພວກເຂົາຄວນຈະເຮັດສິ່ງໜ້າກຽດຊັງນີ້ເພື່ອໃຫ້ຢູດາຜິດບາບ

[36]ເພາະສະນັ້ນ ພຣະຜູ້ເປັນເຈົ້າພຣະເຈົ້າແຫ່ງອິສຣາເອນກ່າວກ່ຽວກັບເມືອງນີ້ແກ່ເຈົ້າທັງ-
ຫລາຍວ່າ 'ເມືອງນີ້ຈະຖືກຍົກໄວ້ໃນມືຂອງກະສັດແຫ່ງບາບີໂລນ ດ້ວຍດາບ ດ້ວຍການອຶດຫິວ
ອາຫານ ແລະດ້ວຍພະຍາດລະບາດ' [37]ເບິ່ງແມ ເຮົາຈະຮວບຮວມພວກເຂົາມາຈາກປະເທດທັງ

ປວງ ຊຶ່ງເຮົາໄດ້ຂັບໄລ່ເຂົາໃຫ້ໄປຢູ່ ດ້ວຍຄວາມພິໂລດ ແລະຄວາມໂກດຮ້າຍຂອງເຮົານັ້ນ
ເຮົາຈະນຳພວກເຂົາກັບມາຍັງທີ່ນີ້ ແລະຈະໃຫ້ພວກເຂົາອາໄສຢູ່ຢ່າງປອດໄພ [38]ພວກເຂົາຈະ
ເປັນປະຊາຊົນຂອງເຮົາ ແລະເຮົາຈະເປັນພຣະເຈົ້າຂອງເຂົາ [39]ເຮົາຈະໃຫ້ໃຈດຽວ ແລະທາງ
ດຽວແກ່ພວກເຂົາ ເພື່ອພວກເຂົາຈະຢຳເກງເຮົາຢູ່ເປັນນິດ ເພື່ອເປັນປະໂຫຍດແກ່ເຂົາ ແລະແກ່
ລູກຫລານຂອງພວກເຂົາທີ່ຕາມມາ [40]ເຮົາຈະເຮັດຄຳໝັ້ນສັນຍານິລັນດອນກັບພວກເຂົາ ເຮົາຈະ
ບໍ່ຫັນຈາກການເຮັດດີແກ່ເຂົາທັງຫລາຍ ແລະເຮົາຈະບັນຈຸຄວາມຢຳເກງເຮົາໄວ້ໃນໃຈຂອງພວກ
ເຂົາ ເພື່ອວ່າເຂົາຈະບໍ່ໄດ້ຫັນໄປຈາກເຮົາ [41]ເຮົາຈະປິຕິຍິນດີໃນການເຮັດດີແກ່ເຂົາ ແລະເຮົາ
ຈະປູກເຂົາໄວ້ໃນແຜ່ນດິນນີ້ດ້ວຍຄວາມໝັ້ນພຽນ ດ້ວຍສຸດໃຈຂອງເຮົາ ແລະສຸດຈິດຂອງເຮົາ
[42]ເພາະພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເຮົາໄດ້ນຳເອົາຄວາມຮ້າຍອັນຍິ່ງໃຫຍ່ທັງໝົດມາເໜືອ
ຊົນຊາດນີ້ສັນໃດ ເຮົາກໍຈະນຳຄວາມດີທັງໝົດຊຶ່ງເຮົາໄດ້ສັນຍາໄວ້ມາເໜືອພວກເຂົາສັນນັ້ນ
[43]ພວກເຂົາຈະຊື້ຂາຍນາກັນໃນແຜ່ນດິນຊຶ່ງເຈົ້າກ່າວເຖິງວ່າ ເປັນທີ່ຮົກຮ້າງເສຍ ບໍ່ມີມະນຸດຫລື
ສັດ ຖືກມອບໄວ້ໃນມືຂອງຄົນບາບີໂລນ [44]ທີ່ນານັ້ນຈະຊື້ກັນດ້ວຍເງິນ ໜັງສືກໍຈະຕ້ອງລົງນາມ
ແລະປະທັບຕາ ແລະລົງນາມພະຍານໃນແຜ່ນດິນຂອງເບັນຢາມິນ ໃນທີ່ຕ່າງໆແຖບກຸງເຢຣູ-
ຊາເລັມ ແລະໃນຫົວເມືອງຢູດາ ໃນຫົວເມືອງແຖບແດນເມືອງພູເຂົາ ໃນຫົວເມືອງແຖບພູເຂົາ
ແລະໃນຫົວເມືອງແຖບພາກໃຕ້ ເພາະເຮົາຈະໃຫ້ການເປັນຊະເລີຍຂອງພວກເຂົາທັງຫລາຍກັບສູ່
ສະພາບເດີມ" ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ

# ບົດທີ 33

## ກຸງເຢຣູຊາເລັມຖືກທຳລາຍ ແລະອິສຣາເອນຖືກນຳໄປເປັນຊະເລີຍ

[1]ພຣະທຳຂອງພຣະຜູ້ເປັນເຈົ້າມາຍັງເຢເຣມີຢາເທື່ອທີ່ສອງ ເມື່ອເພິ່ນຍັງຖືກກັກຕົວຢູ່ໃນບໍ-
ລິເວນຂອງທະຫານຮັກສາພະອົງ ວ່າ [2]"ພຣະຜູ້ເປັນເຈົ້າຜູ້ຊົງສ້າງ ພຣະຜູ້ເປັນເຈົ້າຜູ້ຊົງປັ້ນ
ເພື່ອສະຖາປະນາໄວ້ ພຣະຜູ້ເປັນເຈົ້າຄືພຣະນາມຂອງພຣະອົງ ກ່າວດັ່ງນີ້ວ່າ [3]ຈົ່ງທູນເຮົາ
ແລະເຮົາຈະຕອບເຈົ້າ ແລະຈະສະແດງສິ່ງທີ່ຍິ່ງໃຫຍ່ ແລະອຳນາດໃຫຍ່ໂຕ ຊຶ່ງເຈົ້າບໍ່ຮູ້ນັ້ນໃຫ້
ແກ່ເຈົ້າ [4]ເພາະວ່າພຣະຜູ້ເປັນເຈົ້າພຣະເຈົ້າແຫ່ງອິສຣາເອນໄດ້ກ່າວດັ່ງນີ້ກ່ຽວກັບເລື່ອງເຮືອນ
ໃນກຸງນີ້ ແລະກ່ຽວກັບເລື່ອງພະລາຊະວັງຂອງບັນດາກະສັດແຫ່ງຢູດາ ຊຶ່ງຖືກຮື້ລົງ ເພື່ອເຮັດ
ກອງດິນຕໍ່ຕ້ານ ແລະດາບ [5]ພວກເຂົາຈະມາຮົບກັບຊາວບາບີໂລນ ແລະເຮັດໃຫ້ຄົນເປັນສົບໄປ
ເຕັມບ້ານເຕັມເຮືອນ ເປັນຄົນທີ່ເຮົາສັງຫານດ້ວຍຄວາມໂກດຮ້າຍ ແລະຄວາມພິໂລດຂອງເຮົາ
ເພາະໄດ້ເຊື່ອງໜ້າຂອງເຮົາຈາກກຸງນີ້ກໍເນື່ອງດ້ວຍຄວາມຊົ່ວຂອງພວກເຂົາ [6]ເບິ່ງແມ ເຮົາຈະ
ນຳການປິ່ນປົວ ແລະການຮັກສາມາໃຫ້ ແລະເຮົາຈະຮັກສາເຂົາທັງຫລາຍໃຫ້ຫາຍ ແລະເປີດ-
ເຜີຍສັນຕິສຸກ ແລະຄວາມຈິງຢ່າງອຸດົມ [7]ເຮົາຈະໃຫ້ພວກຊະເລີຍແຫ່ງຢູດາ ແລະພວກຊະເລີຍ
ແຫ່ງອິສຣາເອນກັບສູ່ສະພາບເດີມ ແລະຈະສ້າງພວກເຂົາເສຍໃໝ່ເໝືອນກັບທີ່ພວກເຂົາເປັນ
ມາແຕ່ເດີມນັ້ນ [8]ເຮົາຈະຊຳລະພວກເຂົາຈາກບັນດາຄວາມຊົ່ວຊ້າ ຊຶ່ງພວກເຂົາໄດ້ເຮັດຕໍ່ເຮົາ
ແລະຈະໃຫ້ອະໄພບັນດາຄວາມຊົ່ວຊ້າຊຶ່ງເຂົາໄດ້ເຮັດ ແລະການລະເມີດຕໍ່ເຮົາ [9]ແລະກຸງນີ້ຈະ

ເຮັດໃຫ້ເຮົາມີຊື່ອັນໃຫ້ຄວາມຊື່ນບານ ເປັນທີ່ສັນເສີນ ແລະເປັນກຽດຕໍ່ໜ້າບັນດາປະຊາຊາດທັງ
ໝົດແຫ່ງແຜ່ນດິນໂລກ ຊຶ່ງຈະໄດ້ຍິນເຖິງຄວາມດີທັງໝົດຊຶ່ງເຮົາໄດ້ເຮັດເພື່ອພວກເຂົາ ພວກ
ເຂົາຈະຢ້ານກົວ ແລະສະທົກສະທ້ານ ເພາະຄວາມດີ ແລະຄວາມຈະເລີນທຸກຢ່າງຊຶ່ງເຮົາໄດ້
ຈັດຫາໃຫ້ເມືອງນັ້ນ
[10]ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ໃນສະຖານທີ່ນີ້ຊຶ່ງເຈົ້າກ່າວວ່າ ຈະເປັນທີ່ຖິ້ມຮ້າງ ບໍ່ມີມະ-
ນຸດ ຫລືສັດ ໃນຫົວເມືອງແຫ່ງຢູດາ ແລະຕາມຖະໜົນກຸງເຢຣູຊາເລັມຊຶ່ງຮົກຮ້າງເສຍ ບໍ່ມີ
ມະນຸດ ຫລືຊາວເມືອງ ຫລືສັດ [11]ບ່ອນນັ້ນຈະໄດ້ຍິນສຽງບັນເທີງ ແລະສຽງມ່ວນຊື່ນ ສຽງເຈົ້າ
ບ່າວ ແລະສຽງເຈົ້າສາວ ສຽງບັນດາຄົນເຫລົ່ານັ້ນທີ່ຮ້ອງເພງອີກ ໃນຂະນະທີ່ພວກເຂົານຳ
ເຄື່ອງບູຊາແຫ່ງການສັນເສີນມາຍັງພຣະນິເວດຂອງພຣະຜູ້ເປັນເຈົ້າ ວ່າ ‘ຈົ່ງສັນເສີນພຣະຜູ້-
ເປັນເຈົ້າຈອມໂຍທາ ເພາະພຣະຜູ້ເປັນເຈົ້າປະເສີດ ເພາະຄວາມເມດຕາຂອງພຣະອົງດຳລົງຢູ່
ເປັນນິດ’ ເພາະເຮົາຈະໃຫ້ພວກຊະເລີຍແຫ່ງແຜ່ນດິນນັ້ນກັບສູ່ສະພາບເດີມ ພຣະຜູ້ເປັນເຈົ້າ
ກ່າວດັ່ງນີ້ແຫລະ
[12]ພຣະຜູ້ເປັນເຈົ້າຈອມໂຍທາກ່າວດັ່ງນີ້ວ່າ ໃນສະຖານທີ່ນີ້ຊຶ່ງເປັນທີ່ຮົກຮ້າງ ບໍ່ມີມະນຸດ
ຫລືສັດ ແລະໃນຫົວເມືອງທັງໝົດຂອງທີ່ນີ້ ຈະເປັນທີ່ຢູ່ອາໄສຂອງຜູ້ລ້ຽງແກະ ໄດ້ລ້ຽງແກະ
ຂອງຕົນອີກ

## ຜູ້ສືບສາຍເລືອດຂອງດາວິດຈະຄອບຄອງອີກ

[13]ພຣະຜູ້ເປັນເຈົ້າກ່າວວ່າ ໃນຫົວເມືອງແຖບພູເຂົາ ໃນຫົວເມືອງແຖບພາກໃຕ້ ໃນແຜ່ນດິນ
ແຫ່ງເບັນຢາມິນ ຕາມສະຖານທີ່ຮອບກຸງເຢຣູຊາເລັມ ໃນຫົວເມືອງຢູດາ ຈະມີຝູງແກະຜ່ານ
ກ້ອງມືຂອງຜູ້ທີ່ນັບມັນອີກ
[14]ພຣະຜູ້ເປັນເຈົ້າກ່າວວ່າ ເບິ່ງແມ ວັນນັ້ນຈະມາເຖິງ ຄືເມື່ອເຮົາຈະໃຫ້ສິ່ງດີທີ່ເຮົາສັນຍາ
ໄວ້ຕໍ່ເຊື້ອສາຍອິສຣາເອນ ແລະເຊື້ອສາຍຢູດາສຳເລັດ [15]ໃນວັນເຫລົ່ານັ້ນ ແລະໃນເວລານັ້ນ
ເຮົາຈະໃຫ້ກະສັດຜູ້ຊອບທຳເກີດມາເພື່ອດາວິດ ເພິ່ນຈະໃຫ້ຄວາມຍຸດຕິທຳ ແລະຄວາມຊອບ
ທຳໃນແຜ່ນດິນນັ້ນ [16]ໃນເທື່ອນັ້ນ ຢູດາຈະໄດ້ຮັບການຊ່ວຍໃຫ້ລອດພົ້ນ ແລະເຢຣູຊາເລັມຈະ
ອາໄສຢູ່ຢ່າງປອດໄພ ແລະນີ້ເປັນຊື່ຊຶ່ງພວກເຂົາຈະເອີ້ນເມືອງນັ້ນຄື ‘ພຣະຜູ້ເປັນເຈົ້າຊົງເປັນ-
ຄວາມຊອບທຳຂອງເຮົາ’ [17]ເພາະພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ດາວິດຈະບໍ່ຂັດສົນຜູ້ທີ່ຈະປະ-
ທັບເທິງພະທີ່ນັ່ງແຫ່ງເຊື້ອສາຍອິສຣາເອນ [18]ແລະປະໂລຫິດຄົນເລວີຈະບໍ່ຂັດສົນຜູ້ທີ່ຢູ່ຕໍ່ໜ້າ
ເຮົາ ເພື່ອຖວາຍເຄື່ອງເຜົາບູຊາ ແລະເຜົາເຄື່ອງບູຊາພືດຜົນເປັນເມັດ ແລະເຮັດການບູຊາ
ຕ່າງໆເປັນນິດ”
[19]ພຣະທຳຂອງພຣະຜູ້ເປັນເຈົ້າມາຍັງເຢເຣມີຢາວ່າ [20]“ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ຖ້າ
ເຈົ້າຫັກພັນທະສັນຍາຂອງເຮົາດ້ວຍວັນ ແລະຫັກຄຳໝັ້ນສັນຍາຂອງເຮົາດ້ວຍຄືນໄດ້ ຈົນວັນ
ແລະຄືນມາເຖິງຕາມເວລາກຳນົດບໍ່ໄດ້ [21]ແລ້ວຈຶ່ງຈະຫັກຄຳໝັ້ນສັນຍາຂອງເຮົາຊຶ່ງມີຕໍ່ດາວິດຜູ້
ຮັບໃຊ້ຂອງເຮົາໄດ້ ຈົນເພິ່ນບໍ່ມີລູກຊາຍທີ່ຈະສະເຫວີຍລາດເທິງພະທີ່ນັ່ງຂອງເພິ່ນ ແລະຫັກ
ຄຳໝັ້ນສັນຍາຂອງເຮົາ ຊຶ່ງມີຕໍ່ປະໂລຫິດ ຄົນເລວີຜູ້ປົວລະບັດຂອງເຮົາໄດ້ [22]ບໍລິວານຂອງຟ້າ

ສະຫວັນຈະນັບບໍ່ໄດ້ ແລະເມັດດິນຊາຍທີ່ທະເລກໍຕວງບໍ່ໄດ້ສັນໃດ ເຮົາກໍຈະໃຫ້ເຊື້ອສາຍຂອງ
ດາວິດຜູ້ຮັບໃຊ້ຂອງເຮົາ ແລະຄົນ ເລວີຜູ້ບົວລະບັດເຮົາ ທະວີຫລາຍຂຶ້ນສັນນັ້ນ”
23ພຣະທຳຂອງ ພຣະຜູ້ເປັນເຈົ້າ ມາເຖິງ ເຢເຣມີຢາ ວ່າ 24“ເຈົ້າບໍ່ໄດ້ພິຈາລະນາບໍ ປະຊາຊົນ
ເຫລົ່ານີ້ເວົ້າກັນຢ່າງໃດ ຄືເວົ້າກັນວ່າ ‘ພຣະຜູ້ເປັນເຈົ້າ ຊົງປະຖິ້ມສອງຄອບຄົວທີ່ພຣະອົງຊົງ
ເລືອກໄວ້ເສຍແລ້ວ’ ດັ່ງນີ້ແຫລະ ພວກເຂົາໄດ້ໝິ່ນປະໝາດປະຊາຊົນຂອງເຮົາ ດ້ວຍເຫດນີ້
ພວກເຂົາຈຶ່ງບໍ່ເປັນປະຊາຊາດຕໍ່ໜ້າເຂົາທັງຫລາຍອີກຕໍ່ໄປ 25ພຣະຜູ້ເປັນເຈົ້າ ກ່າວດັ່ງນີ້ວ່າ ຖ້າ
ເຮົາບໍ່ໄດ້ສະຖາປະນາຄຳໝັ້ນສັນຍາຂອງເຮົາກັບວັນແລະຄືນ ແລະສະຖາປະນາກົດຕ່າງໆຂອງ
ຟ້າສະຫວັນ ແລະແຜ່ນດິນໂລກແລ້ວ 26ເຮົາຈຶ່ງຈະປະຖິ້ມເຊື້ອສາຍຂອງຢາໂຄບ ແລະດາວິດ
ຜູ້ຮັບໃຊ້ຂອງເຮົາ ແລະຈະບໍ່ເລືອກຜູ້ໜຶ່ງຈາກເຊື້ອສາຍຂອງເຂົາໃຫ້ຄອບຄອງເໜືອເຊື້ອສາຍ
ຂອງອັບຣາຮາມ ອີຊາກ ແລະຢາໂຄບ ເພາະເຮົາຈະໃຫ້ການເປັນຊະເລີຍຂອງພວກເຂົາກັບສູ່
ສະພາບເດີມ ແລະຈະມີຄວາມອີດູກູນາເໜືອພວກເຂົາ”

# ບົດທີ 34

## ເຢເຣມີຢາຕັກເຕືອນເຊເດກີຢາ

1ພຣະທຳຊຶ່ງມາຈາກ ພຣະຜູ້ເປັນເຈົ້າ ເຖິງ ເຢເຣມີຢາ ເມື່ອ ເນບູກາດເນັດຊາ ກະສັດ ແຫ່ງ
ເມືອງ ບາບີໂລນ ແລະກອງທັບທັງໝົດຂອງພະອົງ ບັນດາລາຊະອານາຈັກໃນແຜ່ນດິນໂລກ
ຊຶ່ງຢູ່ໃຕ້ການຄອບຄອງຂອງພະອົງ ແລະຊົນຊາດທັງຫລາຍທີ່ຕໍ່ສູ້ກັບກຸງ ເຢຣູຊາເລັມ ແລະຫົວ
ເມືອງທັງປວງຂອງກຸງນັ້ນວ່າ 2“ພຣະຜູ້ເປັນເຈົ້າ ພຣະເຈົ້າ ແຫ່ງ ອິສຣາເອນ ກ່າວດັ່ງນີ້ວ່າ ຈົ່ງໄປ
ເວົ້າກັບ ເຊເດກີຢາ ກະສັດ ແຫ່ງ ຢູດາ ແລະກ່າວ ແກ່ເພິ່ນວ່າ ‘ພຣະຜູ້ເປັນເຈົ້າ ກ່າວດັ່ງນີ້ວ່າ
ເບິ່ງແມ ເຮົາຈະມອບກຸງນີ້ໄວ້ໃນມືກະສັດ ບາບີໂລນ ແລະລາວຈະເຜົາເສຍດ້ວຍໄຟ 3ພວກເຈົ້າ
ຈະບໍ່ລອດພົ້ນໄປຈາກມືຂອງລາວ ແຕ່ຈະຖືກຈັບແລະຖືກມອບໄວ້ໃນມືຂອງລາວ ເຈົ້າຈະໄດ້
ເຫັນກະສັດ ແຫ່ງ ບາບີໂລນ ຕາຕໍ່ຕາ ແລະຈະໄດ້ລົມກັນປາກຕໍ່ປາກ ແລະເຈົ້າຈະຕ້ອງໄປຍັງ
ບາບີໂລນ’ 4ຂ້າແດ່ ເຊເດກີຢາ ກະສັດ ແຫ່ງ ຢູດາ ຢ່າງໃດກໍດີ ຂໍຊົງຮັບຟັງພຣະທຳຂອງ ພຣະຜູ້-
ເປັນເຈົ້າ ພຣະຜູ້ເປັນເຈົ້າ ກ່າວກ່ຽວກັບພະອົງດັ່ງນີ້ວ່າ ເຈົ້າຈະບໍ່ຕາຍດ້ວຍດາບ 5ເຈົ້າຈະຕາຍ
ດ້ວຍຄວາມສະຫງົບ ແລະເຂົາຈະເຜົາເຄື່ອງຫອມເພື່ອສືບບັນພະບູລຸດຂອງເຈົ້າ ຄືບັນດາກະສັດ
ຊຶ່ງຢູ່ກ່ອນເຈົ້າສັນໃດ ເຂົາກໍຈະເຜົາເຄື່ອງຫອມເພື່ອເຈົ້າສັນນັ້ນ ແລະເຂົາຈະຮ້ອງຄາງເພື່ອເຈົ້າ
ວ່າ ‘ອະນິດຈັງ ພະອົງເຈົ້າຂ້າ’ ເພາະເຮົາໄດ້ລັ່ນຄຳເວົ້າໄວ້ແລ້ວ” ພຣະຜູ້ເປັນເຈົ້າ ກ່າວດັ່ງນີ້
ແຫລະ

6ແລ້ວ ເຢເຣມີຢາ ຜູ້ປະກາດພຣະທຳ ໄດ້ທູນບັນດາພຣະທຳ ເຫລົ່ານີ້ຕໍ່ ເຊເດກີຢາ ກະສັດ ແຫ່ງ
ຢູດາ ໃນກຸງ ເຢຣູຊາເລັມ 7ຂະນະທີ່ກອງທັບຂອງກະສັດ ແຫ່ງ ບາບີໂລນ ກຳລັງສູ້ຮົບກຸງ ເຢຣູຊາ-
ເລັມ ແລະຫົວເມືອງ ແຫ່ງ ຢູດາ ທັງໝົດທີ່ຍັງເຫລືອຢູ່ ຄື ເມືອງ ລາກິດ ແລະເມືອງ ອາເຊກາ
ເພາະຍັງເຫລືອຢູ່ສອງ ເມືອງນີ້ເທົ່ານັ້ນທີ່ເປັນຫົວເມືອງ ຢູດາ ທີ່ມີກຳແພງປ້ອມ

## ກຸງເຢຣູຊາເລັມຈະຮັບໂທດເພາະໄດ້ບິບບັງຄັບຄົນຈົນ

[8]ພຣະທຳຊຶ່ງມາຈາກ ພຣະຜູ້ເປັນເຈົ້າ ຍັງ ເຢເຣມີຢາ ຫລັງຈາກທີ່ກະສັດ ເຊເດກີຢາ ໄດ້ຊົງ
ເຮັດຄຳໝັ້ນສັນຍາກັບບັນດາປະຊາຊົນໃນກຸງ ເຢຣູຊາເລັມ ວ່າ ຈະປະກາດເລື່ອງອິດສະຫລະ-
ພາບແກ່ພວກເຂົາທັງຫລາຍ ດັ່ງນີ້ [9]ໃຫ້ທຸກຄົນປ່ອຍຂ້າທາດ ເຮັບເຣີ ຂອງຕົນທັງຊາຍ ແລະຍິງ
ເສຍ ໃຫ້ເປັນອິດສະຫລະ ເພື່ອວ່າຈະບໍ່ມີຜູ້ໃດເຮັດໃຫ້ຊາວ ຢິວ ພີ່ນ້ອງຂອງຕົນເປັນຂ້າທາດ
[10]ເມື່ອບັນດາເຈົ້ານາຍ ບັນດາປະຊາຊົນ ຜູ້ເຂົ້າຮ່ວມເຮັດຄຳໝັ້ນສັນຍາໄດ້ຍິນວ່າ ທຸກຄົນຈະ
ປ່ອຍຂ້າທາດຂອງຕົນທັງຊາຍແລະຍິງ ເພື່ອວ່າພວກເຂົາທັງຫລາຍຈະບໍ່ຖືກເຮັດໃຫ້ເປັນຂ້າ
ທາດອີກ ພວກເຂົາກໍໄດ້ເຊື່ອຟັງແລະປ່ອຍຂ້າທາດໃຫ້ເປັນອິດສະຫລະ [11]ແຕ່ພາຍຫລັງ ພວກ
ເຂົາໄດ້ຫວນກັບ ແລະຈັບຂ້າທາດຊາຍແລະຍິງຊຶ່ງໄດ້ປ່ອຍໃຫ້ເປັນອິດສະຫລະນັ້ນມາ ໃຫ້ຢູ່ໃຕ້
ບັງຄັບຂອງການເປັນຂ້າທາດຊາຍແລະຍິງອີກ [12]ພຣະທຳແຫ່ງ ພຣະຜູ້ເປັນເຈົ້າ ຈຶ່ງມາຍັງ ເຢເຣ-
ມີຢາວ່າ [13]“**ພຣະຜູ້ເປັນເຈົ້າ** ພຣະເຈົ້າ ແຫ່ງ ອິສຣາເອນ ກ່າວດັ່ງນີ້ວ່າ ເຮົາໄດ້ເຮັດຄຳໝັ້ນສັນຍາ
ກັບບັນພະບູລຸດຂອງເຈົ້າ ໃນມື້ທີ່ເຮົານຳພວກເຂົາອອກມາຈາກແຜ່ນດິນ ເອຢິບ ອອກຈາກ
ເຮືອນຂ້າທາດວ່າ [14]ເມື່ອສິ້ນສຸດເຈັດປີແລ້ວ ເຈົ້າທຸກຄົນຈະຕ້ອງປ່ອຍພີ່ນ້ອງຊາວ ເຮັບເຣີ ຜູ້ທີ່
ເຂົາເອົາມາຂາຍໄວ້ກັບເຈົ້າ ແລະໄດ້ຮັບໃຊ້ເຈົ້າມາຫົກປີ ເຈົ້າຕ້ອງປ່ອຍເຂົາໃຫ້ເປັນອິດສະຫລະ
ພົ້ນຈາກການຮັບໃຊ້ເຈົ້າ ແຕ່ບັນພະບູລຸດຂອງເຈົ້າບໍ່ຟັງເຮົາ ແລະບໍ່ຫງ່ຽງຫູຟັງເຮົາ [15]ໃນໄວໆນີ້
ເຈົ້າໄດ້ກັບໃຈ ແລະເຮັດສິ່ງຊຶ່ງຖືກຕ້ອງໃນສາຍຕາຂອງເຮົາ ໂດຍການປະກາດອິດສະຫລະ-
ພາບຂອງທຸກຄົນຕໍ່ເພື່ອນບ້ານຂອງຕົນ ແລະເຈົ້າໄດ້ເຮັດຄຳໝັ້ນສັນຍາຕໍ່ໜ້າເຮົາໃນພຣະນິເວດ
ຊຶ່ງເອີ້ນຕາມນາມຂອງເຮົາ [16]ແຕ່ແລ້ວເຈົ້າກໍຫວນກັບເຮັດໃຫ້ນາມຂອງເຮົາເປັນມົນທິນ ໃນເມື່ອ
ເຈົ້າທຸກຄົນຈັບຂ້າທາດຊາຍຍິງຂອງເຈົ້າ ຊຶ່ງເຈົ້າໄດ້ປ່ອຍໃຫ້ເປັນອິດສະຫລະໄປຕາມຄວາມ
ປາດຖະໜາຂອງພວກເຂົາແລ້ວນັ້ນ ກັບມາໃຫ້ຢູ່ໃຕ້ບັງຄັບຂອງການເປັນຂ້າທາດຊາຍແລະຍິງ
ອີກ [17]ເພາະສະນັ້ນ **ພຣະຜູ້ເປັນເຈົ້າ** ຈຶ່ງກ່າວດັ່ງນີ້ວ່າ ເຈົ້າທັງຫລາຍບໍ່ໄດ້ເຊື່ອຟັງເຮົາດ້ວຍການ
ເວົ້າເຖິງເລື່ອງອິດສະຫລະພາບຕໍ່ພີ່ນ້ອງ ແລະເພື່ອນບ້ານຂອງຕົນ **ພຣະຜູ້ເປັນເຈົ້າ** ກ່າວວ່າ
ເບິ່ງແມ ເຮົາເວົ້າເຖິງວ່າ ເຈົ້າທັງຫລາຍເປັນອິດສະຫລະຕໍ່ດາບ ຕໍ່ພະຍາດລະບາດ ແລະຕໍ່
ການອຶດຫິວອາຫານ ເຮົາຈະເຮັດໃຫ້ເຈົ້າຍ້າຍໄປຢູ່ໃນບັນດາລາຊະອານາຈັກຂອງແຜ່ນດິນໂລກ
[18]ແລະຄົນທີ່ລະເມີດຕໍ່ຄຳໝັ້ນສັນຍາຂອງເຮົາ ແລະບໍ່ໄດ້ເຮັດຕາມຂໍ້ຕົກລົງໃນຄຳໝັ້ນສັນຍາ
ຊຶ່ງພວກເຂົາໄດ້ເຮັດຕໍ່ໜ້າເຮົານັ້ນ ເປັນດັ່ງລູກງົວທີ່ເຂົາຕັດອອກເປັນສອງທ່ອນ ແລະຍ່າງຜ່ານ
ກາງທ່ອນເຫລົ່ານັ້ນໄປ [19]ເຈົ້ານາຍແຫ່ງຢູດາກໍດີ ເຈົ້ານາຍແຫ່ງກຸງ ເຢຣູຊາເລັມກໍດີ ຊາຍຕອນ
ກໍດີ ປະໂລຫິດ ແລະບັນດາປະຊາຊົນແຫ່ງແຜ່ນດິນນັ້ນກໍດີ ຜູ້ຜ່ານລະຫວ່າງທ່ອນລູກງົວນັ້ນ
[20]ເຮົາຈະມອບພວກເຂົາໄວ້ໃນມືສັດຕູຂອງພວກເຂົາ ແລະໃນມືຂອງບັນດາຜູ້ທີ່ສະແຫວງຫາຊີ-
ວິດຂອງພວກເຂົາ ສົບຂອງພວກເຂົາຈະເປັນອາຫານຂອງນົກໃນອາກາດ ແລະຂອງສັດໃນ
ແຜ່ນດິນໂລກ [21]ສ່ວນ ເຊເດກີຢາກະສັດແຫ່ງຢູດາ ແລະເຈົ້ານາຍທັງຫລາຍຂອງເຂົານັ້ນ ເຮົາ
ຈະມອບໄວ້ໃນມືສັດຕູຂອງພວກເຂົາ ແລະໃນມືຂອງບັນດາຜູ້ທີ່ສະແຫວງຫາຊີວິດຂອງພວກເຂົາ
ໃນມືຂອງກອງທັບ ແຫ່ງກະສັດ ບາບີໂລນ ຊຶ່ງໄດ້ຖອຍໄປຈາກເຈົ້າແລ້ວນັ້ນ [22]**ພຣະຜູ້ເປັນເຈົ້າ**

ກ່າວວ່າ ເບິ່ງແມ ເຮົາຈະບັນຊາ ແລະຈະນຳເຂົາກັບມາຍັງກຸງນີ້ ແລະພວກເຂົາຈະສູ້ຮົບກັບ
ເມືອງນັ້ນຍຶດເອົາຈົນໄດ້ ແລະເຜົາເສຍດ້ວຍໄຟ ເຮົາຈະເຮັດໃຫ້ຫົວເມືອງຢູດາເປັນທີ່ຮົກຮ້າງ
ເສຍ ບໍ່ມີຄົນອາໄສ"

# ບົດທີ 35

## ເຊື້ອສາຍເລຄາບເປັນແບບຢ່າງທີ່ດີ

[1]ພຣະທຳ ຊຶ່ງ ມາ ຈາກ ພຣະຜູ້ເປັນເຈົ້າ ເຖິງ ເຢເຣມີຢາ ໃນ ລາຊະການ ເຢໂຮຢາກິມ ລູກ ຊາຍ
ຂອງ ໂຢສີຢາກະສັດແຫ່ງຢູດາວ່າ [2]"ຈົ່ງໄປຫາເຊື້ອສາຍ ເຣກາບ ແລະເວົ້າກັບພວກເຂົາ ແລະ
ນຳເຂົາມາທີ່ພຣະນິເວດຂອງ ພຣະຜູ້ເປັນເຈົ້າ ເຂົ້າມາໃນຫ້ອງລະບຽງຫ້ອງໜຶ່ງ ແລ້ວເຊີນໃຫ້
ພວກເຂົາດື່ມເຫລົ້າອະງຸ່ນ" [3]ດັ່ງນັ້ນ ຂ້າພະເຈົ້າຈຶ່ງນຳຢາອາຊານີຢາ ລູກຊາຍ ເຢເຣມີຢາ ຜູ້
ເປັນລູກຊາຍ ຮາບາຊີນີຢາ ແລະພີ່ນ້ອງຂອງລາວ ລູກຊາຍຂອງລາວທັງໝົດ ແລະເຊື້ອສາຍ
ເຣກາບ ທັງໝົດ [4]ຂ້າພະເຈົ້ານຳພວກເຂົາມາຍັງພຣະນິເວດຂອງ ພຣະຜູ້ເປັນເຈົ້າ ມາໃນຫ້ອງ
ລະບຽງຂອງລູກຊາຍຂອງຮານັນ ຜູ້ເປັນລູກຊາຍ ອີກດາລີຢາ ຜູ້ເປັນຄົນຂອງ ພຣະເຈົ້າ ຊຶ່ງຢູ່
ໃກ້ກັບຫ້ອງລະບຽງຂອງ ເຈົ້ານາຍ ເໜືອຫ້ອງລະບຽງຂອງ ມາອາເສຢາ ລູກຊາຍ ຊານລູມ ຜູ້
ເບິ່ງແຍງປະຕູທໍລະນີ (ຕີນປະຕູ) [5]ແລ້ວຂ້າພະເຈົ້າກໍວາງໂຖເຫລົ້າອະງຸ່ນກັບຈອກຫລາຍໜ່ວຍ
ໄວ້ຕໍ່ໜ້າບັນດາລູກຊາຍ ແຫ່ງ ເຊື້ອສາຍ ເຣກາບ ແລະຂ້າພະເຈົ້າເວົ້າກັບພວກເຂົາທັງຫລາຍວ່າ
"ເຊີນດື່ມເຫລົ້າອະງຸ່ນ" [6]ແຕ່ພວກເຂົາຕອບວ່າ "ເຮົາຈະບໍ່ດື່ມເຫລົ້າອະງຸ່ນ ເພາະ ໂຢນາດາບ ລູກ
ຊາຍ ເຣກາບ ຜູ້ເປັນພໍ່ຂອງ ເຮົາບັນຊາເຮົາວ່າ 'ເຈົ້າທັງຫລາຍຢ່າດື່ມເຫລົ້າອະງຸ່ນ ທັງຕົວເຈົ້າ
ແລະລູກຫລານຂອງເຈົ້າເປັນນິດ [7]ເຈົ້າຢ່າສ້າງເຮືອນ ເຈົ້າຢ່າຫວ່ານພືດ ເຈົ້າຢ່າປູກ ຫລືມີສວນ
ອະງຸ່ນ ແລະເຈົ້າຈົ່ງຢູ່ໃນເຕັນຕະຫລອດຊີວິດຂອງເຈົ້າ ເພື່ອເຈົ້າຈະມີຊີວິດຍືນຍາວໃນແຜ່ນດິນ
ຊຶ່ງເຈົ້າອາໄສຢູ່' [8]ເຮົາທັງຫລາຍໄດ້ເຊື່ອຟັງສຽງຂອງ ໂຢນາດາບ ລູກຊາຍ ເຣກາບ ຜູ້ເປັນພໍ່ຂອງ
ເຮົາໃນສິ່ງທັງປວງຊຶ່ງເພິ່ນໄດ້ບັນຊາເຮົາ ຄືບໍ່ດື່ມເຫລົ້າອະງຸ່ນຕະຫລອດຊີວິດຂອງເຮົາ ທັງຕົວ
ເຮົາ ເມຍ ລູກຊາຍ ບຸດສາວຂອງເຮົາ [9]ແລະບໍ່ສ້າງເຮືອນ ເພື່ອຈະອາໄສຢູ່ ເຮົາບໍ່ມີສວນອະ-
ງຸ່ນຫລືນາ ຫລືພືດ [10]ແຕ່ເຮົາເຄີຍຢູ່ໃນເຕັນ ໄດ້ເຊື່ອຟັງ ແລະເຮັດທຸກສິ່ງຊຶ່ງ ໂຢນາດາບພໍ່ຂອງ
ເຮົາໄດ້ບັນຊາເຮົາໄວ້ [11]ແຕ່ຕໍ່ມາເມື່ອ ເນບູກາດເນັດຊາກະສັດແຫ່ງ ບາບີໂລນ ໄດ້ຍົກມາຕໍ່ສູ້ກັບ
ແຜ່ນດິນນີ້ ເຮົາເວົ້າວ່າ 'ມາແມ ໃຫ້ເຮົາໄປຍັງກຸງ ເຢຣູຊາເລັມ ເພາະຢ້ານກອງທັບຄົນ ບາບີໂລນ
ແລະເພາະຢ້ານກອງທັບຄົນຊີເຣຍ' ດັ່ງນັ້ນ ເຮົາຈຶ່ງຢູ່ໃນກຸງ ເຢຣູຊາເລັມ"

[12]ແລ້ວພຣະທຳແຫ່ງ ພຣະຜູ້ເປັນເຈົ້າ ຈຶ່ງມາເຖິງ ເຢເຣມີຢາວ່າ [13]"ພຣະຜູ້ເປັນເຈົ້າ ຈອມໂຍ-
ທາ ພຣະເຈົ້າ ແຫ່ງ ອິສຣາເອນ ກ່າວດັ່ງນີ້ວ່າ ຈົ່ງໄປບອກບັນດາຜູ້ຊາຍຂອງຢູດາ ແລະບອກ
ຊາວກຸງ ເຢຣູຊາເລັມ ວ່າ ພຣະຜູ້ເປັນເຈົ້າ ກ່າວວ່າ ເຈົ້າຈະບໍ່ຮັບຄຳສັ່ງສອນ ເພື່ອຈະເຊື່ອຟັງ
ຖ້ອຍຄຳຂອງເຮົາບໍ [14]ຄຳບັນຊາຊຶ່ງ ໂຢນາດາບ ລູກຊາຍ ເຣກາບ ໃຫ້ໄວ້ແກ່ລູກຊາຍທັງຫລາຍ
ຂອງຕົນ ບໍ່ໃຫ້ດື່ມເຫລົ້າອະງຸ່ນນັ້ນ ພວກເຂົາກໍໄດ້ຮັກສາໄວ້ແລ້ວ ແລະພວກເຂົາບໍ່ໄດ້ດື່ມເລີຍ
ຈົນຮອດມື້ນີ້ ເພາະພວກເຂົາທັງຫລາຍໄດ້ເຊື່ອຟັງຄຳບັນຊາແຫ່ງພໍ່ຂອງຕົນ ແຕ່ເຮົາໄດ້ເວົ້າກັບ

ພວກເຈົ້າຢ່າງບໍ່ຢຸດຢັ້ງ ແຕ່ເຈົ້າທັງຫລາຍກໍບໍ່ໄດ້ຟັງເຮົາ [15]ເຮົາໄດ້ສົ່ງບັນດາຜູ້ຮັບໃຊ້ຂອງເຮົາຄື
ຜູ້ປະກາດພຣະທຳມາຫາເຈົ້າ ສົ່ງພວກເຂົາມາຢ່າງບໍ່ຂາດສາຍ ກ່າວວ່າ 'ບັດນີ້ເຈົ້າທຸກຄົນຈົ່ງ
ຖອຍຫລັງກັບຈາກທາງຊົ່ວຂອງຕົນ ແລະແກ້ໄຂການກະທຳຂອງເຈົ້າທັງຫລາຍເສຍ ຢ່າໄປຕິດ
ສອຍຫ້ອຍຕາມພະອື່ນ ເພື່ອບົວລະບັດພະເຫລົ່ານັ້ນ ແລ້ວເຈົ້າຈະໄດ້ອາໄສຢູ່ໃນແຜ່ນດິນ ຊຶ່ງ
ເຮົາໄດ້ປະທານແກ່ເຈົ້າ ແລະບັນພະບູລຸດຂອງເຈົ້າ' ແຕ່ເຈົ້າບໍ່ໄດ້ຫງ່ຽງຫູຟັງ ຫລືເຊື່ອຟັງເຮົາ
[16]ລູກຊາຍທັງຫລາຍຂອງ ໂຢນາດາບ ລູກຊາຍຂອງ ເຣກາບ ໄດ້ເຮັດຕາມຄຳບັນຊາຊຶ່ງພໍ່ຂອງເຂົາ
ໄດ້ສັ່ງໄວ້ ແຕ່ຊົນຊາດນີ້ບໍ່ໄດ້ເຊື່ອຟັງເຮົາ [17]ເຫດສະນັ້ນ ພຣະຜູ້ເປັນເຈົ້າພຣະເຈົ້າຈອມໂຍທາ
ພຣະເຈົ້າແຫ່ງອິສຣາເອນ ກ່າວດັ່ງນີ້ວ່າ ເບິ່ງແມ ເຮົາຈະນຳຄວາມຮ້າຍທັງໝົດຊຶ່ງເຮົາປະ-
ກາດໄວ້ມາເໜືອຢູດາ ແລະບັນດາຊາວກຸງເຢຣູຊາເລັມ ເພາະວ່າເຮົາເວົ້າກັບພວກເຂົາທັງ-
ຫລາຍ ແຕ່ກໍບໍ່ຟັງ ເຮົາໄດ້ເອີ້ນພວກເຂົາ ແຕ່ເຂົາບໍ່ຂານຕອບ"

[18]ເຢເຣມີຢາໄດ້ເວົ້າກັບເຊື້ອສາຍເຣກາບວ່າ "ພຣະຜູ້ເປັນເຈົ້າຈອມໂຍທາ ພຣະເຈົ້າແຫ່ງ
ອິສຣາເອນ ກ່າວດັ່ງນີ້ວ່າ ເພາະວ່າເຈົ້າໄດ້ເຊື່ອຟັງຄຳບັນຊາຂອງໂຢນາດາບພໍ່ຂອງເຈົ້າ ແລະ
ຖືຮັກສາຂໍ້ບັງຄັບຂອງເພິ່ນທັງໝົດ ແລະເຮັດທຸກຢ່າງທີ່ເພິ່ນບັນຊາເຈົ້າ [19]ເພາະສະນັ້ນ ພຣະຜູ້-
ເປັນເຈົ້າຈອມໂຍທາ ພຣະເຈົ້າແຫ່ງອິສຣາເອນ ກ່າວດັ່ງນີ້ວ່າ ໂຢນາດາບລູກຊາຍເຣກາບຈະ
ບໍ່ຂາດຜູ້ຊາຍທີ່ຢືນຢູ່ຕໍ່ໜ້າເຮົາເລີຍເປັນນິດ"

# ບົດທີ 36

## ບາຣຸກອ່ານໜັງສືມ້ວນໃນພຣະວິຫານ

[1]ໃນປີທີສີ່ແຫ່ງລາຊະການ ເຢໂຮຢາກິມ ກະສັດຢູດາ ພະລາຊະໂອລົດຂອງ ໂຢສິຢາ ນັ້ນ
[2]ພຣະຜູ້ເປັນເຈົ້າຊົງກ່າວຕໍ່ເຢເຣມີຢາວ່າ, "ເຈົ້າຈົ່ງເອົາເຈ້ຍມ້ວນໜຶ່ງມາ ແລ້ວຂຽນຖ້ອຍຄຳທັງ
ໝົດທີ່ກ່ຽວກັບອິສຣາເອນ ຢູດາ ແລະຊົນຊາດທັງປວງ ທີ່ເຮົາໄດ້ບອກເຈົ້າຕັ້ງແຕ່ຄາວໂຢສິຢາ
ເປັນກະສັດຈົນເຖິງທຸກມື້ນີ້ລົງໃນເຈ້ຍນັ້ນ. [3]ບາງທີ ເມື່ອປະຊາຊົນຢູດາໄດ້ຍິນເລື່ອງການທຳ-
ລາຍທີ່ເຮົາຕັ້ງໃຈຈະນຳມາຍັງພວກເຂົານັ້ນ ພວກເຂົາທຸກຄົນອາດຫລີກໜີຈາກທາງຊົ່ວຮ້າຍເສຍ
ແລ້ວເຮົາກໍຈະໃຫ້ອະໄພບາບ ແລະຄວາມຊົ່ວຮ້າຍແກ່ພວກເຂົາ."

[4]ດັ່ງນັ້ນ ເຢເຣມີຢາຈຶ່ງໃຫ້ບາຣຸກລູກຊາຍເນຣີຢາ ຂຽນທຸກໆ ສິ່ງທີ່ພຣະຜູ້ເປັນເຈົ້າຊົງ
ບອກລົງໃນເຈ້ຍນັ້ນ. [5]ເຢເຣມີຢາໄດ້ບອກບາຣຸກວ່າ, [6]"ຂ້າພະເຈົ້ານັ້ນຖືກຫ້າມບໍ່ໃຫ້ໄປວິຫານ
ອີກຕໍ່ໄປ ສະນັ້ນ ຂ້າພະເຈົ້າຈຶ່ງຢາກໃຫ້ທ່ານໄປທີ່ນັ້ນໃນມື້ທີ່ປະຊາຊົນຖືສິນອົດອາຫານ ແລ້ວ
ຈົ່ງອ່ານໜັງສືມ້ວນທີ່ທ່ານໄດ້ຂຽນຕາມຄຳບອກຂອງຂ້າພະເຈົ້າໃຫ້ປະຊາຊົນຟັງ ຮ່ວມທັງປະ-
ຊາຊົນທີ່ມາຈາກຫົວເມືອງຕ່າງໆ ດ້ວຍ ເພື່ອໃຫ້ພວກເຂົາໄດ້ຍິນທຸກສິ່ງທີ່ພຣະຜູ້ເປັນເຈົ້າໄດ້
ຊົງບອກຂ້າພະເຈົ້າ. [7]ແລ້ວພວກເຂົາອາດຈະອ້ອນວອນຕໍ່ພຣະຜູ້ເປັນເຈົ້າ ແລະຫລີກໜີຈາກ
ທາງຊົ່ວກໍໄດ້ ເພາະວ່າພຣະຜູ້ເປັນເຈົ້າໄດ້ຊົງຂົ່ມຂູ່ປະຊາຊົນນີ້ດ້ວຍພຣະພິໂລດຢ່າງຮຸນແຮງ."

[8]ດັ່ງນັ້ນ ບາຣຸກຈຶ່ງເຮັດຕາມເຢເຣມີຢາບອກ ຄືລາວໄດ້ອ່ານພຣະຄຳຂອງພຣະຜູ້ເປັນເຈົ້າ
ໃນພຣະວິຫານຢ່າງຖືກຕ້ອງ. [9]ໃນເດືອນທີເກົ້າຂອງປີທີຫ້າ ແຫ່ງລາຊະການເຢໂຮຢາກິມກະ-

ສັດຢູດາ ຜູ້ເປັນລາຊະໂອລົດຂອງໂຢສີຢາ ປະຊາຊົນທັງປວງໄດ້ຢູ່ໃນນະຄອນເຢຣູຊາເລັມ
ແລະທີ່ມາຈາກຫົວເມືອງຕ່າງໆ ໃນປະເທດຢູດາ ໄດ້ຈັດພິທີຖືສິນອົດອາຫານຂຶ້ນຕໍ່ພຣະພັກ
ພຣະຜູ້ເປັນເຈົ້າ. [10]ຂະນະນັ້ນ ຢູ່ທີ່ພະລາຊະສຳນັກຊັ້ນເທິງທາງເຂົ້າປະຕູໃຫຍ່ຂອງພຣະວິຫານ
ໃນຫ້ອງຂອງເກມາຣີຢາລູກຊາຍຂອງຊາຟານ ຜູ້ເປັນລາຊະເລຂາ ບາຣຸກໄດ້ອ່ານຖ້ອຍຄຳ
ຂອງເຢເຣມີຢາໃນໜັງສືມ້ວນ ໃຫ້ປະຊາຊົນຟັງ.

## ບາຣຸກອ່ານໜັງສືມ້ວນໃຫ້ຂ້າລາຊະການຟັງ

[11]ເມື່ອ ມີກາຢາລູກຊາຍຂອງເກມາຣີຢາ ຜູ້ເປັນຫລານຊາຍຂອງຊາຟານ ໄດ້ຟັງບາຣຸກ
ອ່ານຖ້ອຍຄຳຂອງພຣະຜູ້ເປັນເຈົ້າໃນໜັງສືມ້ວນແລ້ວ ລາວກໍໄປຍັງພະລາຊະວັງທີ່ຫ້ອງຂອງ
ລາຊະເລຂາ. [12]ແລະມີພວກເຈົ້ານາຍຫລາຍຄົນນັ່ງປະຊຸມຢູ່ທີ່ນັ້ນ ຄື ເອລີຊາມາ ຜູ້ເປັນລາຊະ
ເລຂາ ເດລາຢາລູກຊາຍຂອງເຊມາຢາ ເອນນາທານລູກຊາຍຂອງອັກໂບ ເກມາຣີຢາຊາ-
ຟານ ເຊເດກີຢາລູກຊາຍຂອງຮານານີຢາ ແລະເຈົ້ານາຍຄົນອື່ນໆ ອີກຫລາຍຄົນ. [13]ມີກາຢາ
ຈຶ່ງເລົ່າເລື່ອງທີ່ຕົນໄດ້ຍິນມາທັງໝົດໃຫ້ພວກເຈົ້ານາຍຟັງ. [14]ແລ້ວພວກເຈົ້ານາຍໄດ້ໃຊ້ເຢຮູດີ
ລູກຊາຍຂອງເນທານີອາຜູ້ເປັນລູກຂອງເຊເລມີຢາ ລູກຊາຍກູຊີ ໄປບອກໃຫ້ບາຣຸກນຳເອົາ
ໜັງສືມ້ວນທີ່ລາວອ່ານໃຫ້ປະຊາຊົນຟັງນັ້ນມາ ບາຣຸກຈຶ່ງໄດ້ຖືໜັງສືມ້ວນມາຫາພວກເຈົ້ານາຍ.
[15]ພວກເຈົ້ານາຍໄດ້ເວົ້າກັບບາຣຸກວ່າ, "ເຊີນນັ່ງລົງ ແລະອ່ານໜັງສືມ້ວນນັ້ນໃຫ້ພວກເຮົາຟັງ
ເບິ່ງດຸ" ບາຣຸກຈຶ່ງອ່ານໃຫ້ພວກເຂົາຟັງ. [16]ຫລັງຈາກອ່ານຈົບແລ້ວ ພວກເພິ່ນກໍຫລຽວເບິ່ງໜ້າ
ກັນດ້ວຍຄວາມຢ້ານ ແລະເວົ້າຕໍ່ບາຣຸກວ່າ, "ພວກເຮົາຕ້ອງລາຍງານເລື່ອງນີ້ໃຫ້ກະສັດຊົງ
ຊາບ." [17]ຕໍ່ມາພວກເຈົ້ານາຍໄດ້ຖາມບາຣຸກວ່າ, "ບັດນີ້ ຈົ່ງບອກພວກເຮົາວ່າ ເຈົ້າຂຽນຖ້ອຍ
ຄຳທັງໝົດນີ້ໄດ້ຢ່າງໃດ? ຂຽນຕາມຄຳບອກຂອງເຢເຣມີຢາບໍ?" [18]ບາຣຸກໄດ້ຕອບວ່າ, "ເຢ-
ເຣມີຢາໄດ້ບອກຖ້ອຍຄຳເຫລົ່ານີ້ແກ່ຂ້ານ້ອຍ ຂ້ານ້ອຍຈຶ່ງບັນທຶກໄວ້ໃນເຈ້ຍມ້ວນດ້ວຍນໍ້າມຶກ."
[19]ແລ້ວເຈົ້ານາຍໄດ້ບອກບາຣຸກວ່າ, "ເຈົ້າກັບເຢເຣມີຢາຕ້ອງໄປລີ້ຢູ່ສາກ່ອນ ຢ່າໃຫ້ໃຜຮູ້ວ່າ
ພວກເຈົ້າລີ້ຢູ່ທີ່ໃດ?"

## ພະລາຊາເຜົາໜັງສືມ້ວນ

[20]ພວກເຈົ້ານາຍໄດ້ມ້ຽນໜັງສືມ້ວນນັ້ນໄວ້ໃນຫ້ອງຂອງເອລີຊາມາຜູ້ເປັນລາຊະເລຂາ ແລ້ວ
ພວກເຂົາໄດ້ເຂົ້າໄປໃນພະລາຊະສຳນັກ ເພື່ອກາບທູນຖ້ອຍຄຳທັງໝົດນັ້ນຕໍ່ພະລາຊາ. [21]ຕໍ່ມາ
ພະລາຊາໄດ້ຊົງສັ່ງໃຫ້ເຢຮູດີໄປເອົາໜັງສືມ້ວນນັ້ນມາ ລາວຈຶ່ງໄປເອົາມາຈາກຫ້ອງຂອງເອລີ-
ຊາມາ ແລ້ວໄດ້ອ່ານຖວາຍພະລາຊາກັບພວກເຈົ້ານາຍທັງໝົດທີ່ຢືນຢູ່ຂ້າງໆ. [22]ເວລານັ້ນເປັນ
ລະດູໜາວ ພະລາຊາໄດ້ຊົງນັ່ງຜີງໄຟຢູ່ໃນພະລາຊະວັງສຳລັບລະດູໜາວ. [23]ເມື່ອເຢຮູດີອ່ານ
ສຸດສາມສີ່ຕອນ ພະລາຊາກໍຊົງເອົາມີດນ້ອຍຕັດຕອນນັ້ນຖິ້ມໃສ່ໄຟ ຊົງເຮັດດັ່ງນີ້ຈົນໜັງສືມ້ວນ
ນັ້ນ ຖືກເຜົາໄຟໝົດ. [24]ແຕ່ບໍ່ເຫັນພະລາຊາກັບຂ້າລາຊະການຢ້ານ ຫລືສະແດງອາການເສຍໃຈ
ຢ່າງໃດເລີຍ. [25]ເຖິງແມ່ນວ່າເອນນາທານ ເດລາຢາ ແລະເກມາຣີຢາໄດ້ທູນຂໍບໍ່ໃຫ້ພະລາຊາ
ເຜົາໜັງສືມ້ວນ. [26]ແຕ່ຊົງສັ່ງໃຫ້ເຈົ້າຊາຍເຢຣາເມເອນ ພ້ອມດ້ວຍເສຣາຢາລູກຊາຍອັດຊະຣິ-
ເອນ ແລະເຊເລມີຢາລູກຊາຍອັບເດເອນ ໄປຈັບເຢເຣມີຢາຜູ້ປະກາດພຣະທຳກັບບາຣຸກສະ-

ໝຽນຂອງເພິ່ນ ແຕ່ພຣະຜູ້ເປັນເຈົ້າໄດ້ຊົງເຊື່ອງຄົນທັງສອງນີ້ໄວ້.

## ເຢເຣມີຢາຂຽນໜັງສືມ້ວນອີກ

27-28ຫລັງຈາກພະລາຊາຊົງເຜົາໜັງສືມ້ວນ ທີ່ບາຣຸກໄດ້ຂຽນຕາມຄຳບອກຂອງເຢເຣມີຢາ
ແລ້ວ ພຣະຜູ້ເປັນເຈົ້າກໍຊົງບອກໃຫ້ເຢເຣມີຢາຂຽນຖ້ອຍຄຳທັງໝົດທີ່ມີຢູ່ໃນໜັງສືມ້ວນສະບັບ
ກ່ອນນັ້ນໄວ້ອີກ. 29ພຣະຜູ້ເປັນເຈົ້າຊົງໃຫ້ເຢເຣມີຢາບອກກະສັດເຢໂຮຢາກິມວ່າ, "ພະອົງໄດ້
ເຜົາໜັງສືມ້ວນ ແລະໄດ້ຖາມຂ້ານ້ອຍວ່າ ເປັນຫຍັງຈຶ່ງຂຽນຄຳວ່າກະສັດບາບີໂລນຈະມາທຳ-
ລາຍປະເທດນີ້ຢ່າງແນ່ນອນ ແລະຈະຂ້າມະນຸດກັບສັດໃນປະເທດນີ້ເສຍ. 30ດັ່ງນັ້ນແຫລະ
ພຣະຜູ້ເປັນເຈົ້າຈຶ່ງບອກພະອົງວ່າ ເຊື້ອສາຍຂອງພະອົງຈະບໍ່ໄດ້ເປັນກະສັດອີກ ເຂົາຈະເອົາ
ສົບຂອງພະອົງຕາກແດດໄວ້ໃນກາງເວັນ ແລະຕາກນໍ້າໝອກໃນຕອນກາງຄືນ. 31ຍ້ອນການ
ກະທຳຂອງພະອົງນັ້ນ ພຣະຜູ້ເປັນເຈົ້າຈະລົງໂທດພະອົງກັບເຊື້ອສາຍ ແລະຂ້າລາຊະການ
ຂອງພະອົງ ພະອົງກັບຊາວເຢຣູຊາເລັມ ແລະຊາວຢູດາບໍ່ໄດ້ເຊື່ອຟັງຄຳເຕືອນຂອງພຣະຜູ້-
ເປັນເຈົ້າ ດັ່ງນັ້ນ ພຣະຜູ້ເປັນເຈົ້າຈຶ່ງຈະນຳໄພພິບັດມາຍັງພະອົງ ກັບປະຊາຊົນທັງໝົດຕາມທີ່
ໄດ້ຂູ່ໄວ້." 32ຕໍ່ມາເຢເຣມີຢາໄດ້ເອົາເຈ້ຍອີກມ້ວນໜຶ່ງມອບໃຫ້ບາຣຸກສະໝຽນຂອງຕົນ ບາຣຸກ
ຈຶ່ງຂຽນຕາມຄຳບອກຂອງເຢເຣມີຢາລົງໃສ່ເຈ້ຍມ້ວນນັ້ນ ລາວໄດ້ຂຽນຖ້ອຍຄຳທີ່ມີຢູ່ໃນໜັງສື
ມ້ວນສະບັບທີ່ກະສັດເຢໂຮຢາກິມເຜົາໄຟນັ້ນທັງໝົດ ແລະເຢເຣມີຢາໄດ້ເພີ່ມຕື່ມຫລາຍຄຳທີ່ຄື
ກັນລົງດ້ວຍ.

# ບົດທີ 37

## ກະສັດເຊເດກີຢາຂໍຮ້ອງເຢເຣມີຢາ

1ເນບູກາດເນັດຊາກະສັດບາບີໂລນ ໄດ້ແຕ່ງຕັ້ງເຊເດກີຢາພະລາຊະໂອລົດຂອງໂຢສີຢາ
ເປັນກະສັດຢູດາ ແທນເຢໂຮຢາກິນພະລາຊະໂອລົດຂອງເຢໂຮຢາກິມ. 2ແຕ່ເຊເດກີຢາເອງ
ພ້ອມທັງຂ້າລາຊະການຂອງເພິ່ນແລະປະຊາຊົນທັງຫລາຍ ບໍ່ໄດ້ເຊື່ອຟັງພຣະຄຳທີ່ພຣະຜູ້ເປັນ-
ເຈົ້າຊົງບອກໃຫ້ເຢເຣມີຢາເວົ້າ.

3ກະສັດເຊເດກີຢາຊົງໃຊ້ເຢຮູການ ລູກຊາຍເຊເລມີຢາ ກັບປະໂລຫິດເຊຟານີຢາ ລູກ
ຊາຍຂອງມາອາເສຢາໄປຫາເຢເຣມີຢາ ພວກເຂົາໄດ້ເວົ້າຕໍ່ເຢເຣມີຢາວ່າ, "ຂໍໃຫ້ອ້ອນວອນຕໍ່
ພຣະຜູ້ເປັນເຈົ້າຂອງພວກເຂົາສຳລັບເຮົາແດ່" ເຢເຣມີຢາຍັງບໍ່ຖືກຄຸມຂັງ. 4ເພິ່ນຍັງໄປຫາມາສູ່
ກັບປະຊາຊົນໄດ້ຢ່າງເສລີ. 5ໃນລະຫວ່າງນັ້ນກອງທັບຂອງກະສັດຟາຣາໂອໄດ້ເຄື່ອນອອກຈາກ
ເອຢິບ ເມື່ອຊາວບາບີໂລນຜູ້ຊຶ່ງກຳລັງໂຈມຕີນະຄອນເຢຣູຊາເລັມຢູ່ໄດ້ຮູ້ຂ່າວນັ້ນ ພວກເຂົາກໍ
ຖອຍທັບອອກຈາກນະຄອນເຢຣູຊາເລັມໄປ. 6ຕໍ່ມາ ພຣະຜູ້ເປັນເຈົ້າຂອງອິສຣາເອນ ຊົງກ່າວ
ຕໍ່ເຢເຣມີຢາວ່າ, 7"ເຈົ້າຈົ່ງບອກກະສັດຢູດາຜູ້ຊຶ່ງໃຊ້ເຈົ້າມາປຶກສາກັບເຮົານັ້ນວ່າ ກອງທັບ
ຂອງກະສັດຟາຣາໂອທີ່ເຄື່ອນອອກມາຊ່ອຍເຈົ້ານັ້ນ ກຳລັງຈະກັບຄືນເອຢິບ ບ້ານເມືອງຂອງ
ຕົນ. 8ແລ້ວຊາວບາບີໂລນຈະກັບມາໂຈມຕີເມືອງນີ້ ພວກເຂົາຈະຍຶດເອົາເມືອງ ແລະເຜົາຖິ້ມ
ເສຍ. 9ເຮົາພຣະຜູ້ເປັນເຈົ້າເຕືອນເຈົ້າວ່າ ຢ່າຫລອກລວງຕົນເອງ ໂດຍຄິດວ່າຊາວບາບີໂລນ

ຈະບໍ່ກັບມາ ເພາະວ່າພວກເຂົາທັງຫລາຍຈະກັບມາອີກ. [10]ເຖິງແມ່ນເຈົ້າຈະເຮັດໃຫ້ກອງທັບທັງ
ໝົດຂອງ ບາບີໂລນ ທີ່ກຳລັງຕໍ່ສູ້ກັບເຈົ້າພ່າຍແພ້ໄປ ຈົນຍັງເຫລືອແຕ່ຄົນທີ່ບາດເຈັບນອນຢູ່ໃນ
ຕູບຜ້າເຕັນເທົ່ານັ້ນ ຄົນເຫລົ່ານີ້ກໍຈະລຸກຂຶ້ນຕໍ່ສູ້ເຜົາເມືອງນີ້ຖິ້ມ."

## ເຢເຣມີຢາຖືກຄຸມຂັງ

[11]ກອງທັບ ບາບີໂລນ ໄດ້ຖອຍອອກຈາກນະຄອນ ເຢຣູຊາເລັມ ໄປ ເພາະວ່າກອງທັບຂອງ
ກະສັດ ຟາຣາໂອ ໄດ້ເຄື່ອນເຂົ້າມາໃກ້. [12]ຂະນະນັ້ນ ເຢເຣມີຢາ ພວມອອກຈາກນະຄອນ ເຢຣູ-
ຊາເລັມ ມຸ່ງໜ້າໄປຍັງດິນແດນ ເບັນຢາມິນ ເພື່ອຮັບເອົາສ່ວນແບ່ງຂອງຕົນຕໍ່ໜ້າປະຊາຊົນ.
[13]ເມື່ອເພິ່ນມາເຖິງປະຕູ ເບັນຢາມິນ ກໍມີທະຫານຄົນໜຶ່ງຊື່ ອີຣີຢາ ລູກຊາຍ ເຊເລມີຢາ ຜູ້ເປັນ
ລູກຊາຍຂອງ ຮານານີຢາ ໄດ້ຈັບ ເຢເຣມີຢາ ແລະເວົ້າຂູ່ວ່າ, "ເຈົ້າກຳລັງໜີໄປຫາຊາວ ບາບີ-
ໂລນ ແມ່ນບໍ?" [14]ເຢເຣມີຢາ ໄດ້ຕອບວ່າ, "ບໍ່ແມ່ນ ຂ້າພະເຈົ້າບໍ່ໄດ້ໜີໄປຫາຊາວ ບາບີໂລນ"
ແຕ່ ອີຣີຢາ ບໍ່ເຊື່ອລາວ ຈຶ່ງຈັບ ເຢເຣມີຢາ ນຳໄປຫາເຈົ້ານາຍ ພວກເຈົ້ານາຍກໍຄຽດແຄ້ນ ແລະ
ຂ້ຽນຕີ ເຢເຣມີຢາ. [15]ແລ້ວຈັບຂັງໄວ້ໃນເຮືອນຂອງ ໂຢນາທານ ຜູ້ເປັນລາຊະເລຂາ (ເຮືອນຫລັງ
ນີ້ໄດ້ປ່ຽນໃຫ້ເປັນຄຸກ).

[16]ເຢເຣມີຢາ ຖືກເຂົາຂັງໄວ້ໃນຫ້ອງໃຕ້ດິນ ເພິ່ນໄດ້ຢູ່ທີ່ນັ້ນເປັນເວລາເຫິງນານ. [17]ກະສັດ ເຊ-
ເດກີຢາ ໄດ້ໃຊ້ໃຫ້ຄົນໄປນຳເອົາ ເຢເຣມີຢາ ແລ້ວຊົງຖາມເພິ່ນເປັນຄວາມລັບທີ່ພະລາຊະວັງວ່າ,
"ມີຖ້ອຍຄຳຫຍັງແດ່ທີ່ ພຣະຜູ້ເປັນເຈົ້າ ຊົງບອກ?" ເຢເຣມີຢາ ໄດ້ທູນຕອບວ່າ, "ມີຢູ່ ຂ້ານ້ອຍ"
ເພິ່ນໄດ້ທູນຕໍ່ໄປວ່າ, "ເຂົາຈະມອບພະອົງໄວ້ໃນກຳມືຂອງກະສັດ ບາບີໂລນ." [18]ແລ້ວທູນຖາມ
ວ່າ, "ຂ້ານ້ອຍໄດ້ເຮັດຜິດຫຍັງແດ່ຕໍ່ສູ້ພະອົງ ຕໍ່ສູ້ຂ້າລາຊະການຂອງພະອົງ ຫລືຕໍ່ສູ້ປະຊາຊົນນີ້
ພະອົງຈຶ່ງໄດ້ຈັບຂ້ານ້ອຍຂັງໄວ້ໃນຄຸກ? [19]ພວກປະກາດພຣະທຳທີ່ໄດ້ບອກພະອົງວ່າ ກະສັດ
ບາບີໂລນ ຈະບໍ່ມາໂຈມຕີພະອົງ ຫລືໂຈມຕີປະເທດນີ້ ດຽວນີ້ພວກເຂົາຢູ່ໃສ? [20]ຂ້າແດ່ພະລາ-
ຊາ ບັດນີ້ຂໍພະອົງຊົງຟັງ ແລະເຮັດຕາມຂ້ານ້ອຍທູນນີ້ທ້ອນ ຄືຢ່າສົ່ງຂ້ານ້ອຍຄືນໄປເຮືອນຂອງ
ໂຢນາທານ ຜູ້ເປັນລາຊະເລຂາຂອງພະອົງ ຖ້າຊົງສົ່ງຂ້ານ້ອຍກັບຄືນໄປ ຂ້ານ້ອຍກໍຈະຕ້ອງ
ຕາຍຢູ່ທີ່ນັ້ນແນ່ນອນ." [21]ດ້ວຍເຫດນີ້ ກະສັດ ເຊເດກີຢາ ຈຶ່ງມີຄຳສັ່ງໃຫ້ກັກຂັງ ເຢເຣມີຢາ ໄວ້ໃນ
ກາງເດີ່ນພະລາຊະວັງ ຢູ່ທີ່ນັ້ນ ເພິ່ນໄດ້ຮັບເຂົ້າຈີ່ມື້ລະກ້ອນຈາກຜູ້ເຮັດເຂົ້າຈີ່ ໄດ້ຮັບທຸກມື້ຈົນ
ວ່າເຂົ້າຈີ່ໃນເມືອງນັ້ນໝົດໄປ ເຢເຣມີຢາ ໄດ້ຢູ່ໃນເດີ່ນພະລາຊະວັງໄປຢ່າງນີ້ແຫລະ.

# ບົດທີ 38

## ເຢເຣມີຢາຖືກຂັງໄວ້ໃນບໍ່ນ້ຳສ້າງ

[1]ເຊຟາຕີຢາ ລູກຊາຍ ມັດຕານ ເກດາລີຢາ ລູກຊາຍ ປັດຊູ ຢູການ ລູກຊາຍ ເຊເລມີຢາ ແລະ
ປັດຊູ ລູກຊາຍ ມັນກີຢາ ໄດ້ຍິນຖ້ອຍຄຳທີ່ ເຢເຣມີຢາ ບອກປະຊາຊົນຄື. [2]ເຢເຣມີຢາ ໄດ້ບອກ
ວ່າ, "ພຣະຜູ້ເປັນເຈົ້າ ຊົງກ່າວວ່າ: ຜູ້ໃດຢູ່ໃນເມືອງຈະຕ້ອງຕາຍຍ້ອນເສິກສົງຄາມ ຫລືຍ້ອນ
ການອຶດຢາກ ແລະໂລກໄພໄຂ້ເຈັບ ແຕ່ຖ້າຜູ້ໃດອອກໄປຍອມຈຳນົນຕໍ່ຊາວ ບາບີໂລນ ຈະບໍ່ຖືກ
ຂ້າ ລາວຈະພົ້ນໄພມີຊີວິດຢູ່ໄດ້." [3]ເຢເຣມີຢາ ໄດ້ບອກພວກເຂົາດ້ວຍວ່າ, "ພຣະຜູ້ເປັນເຈົ້າ ຊົງ

ກ່າວວ່າ ເຮົາຈະມອບເມືອງນີ້ໃຫ້ກອງທັບຂອງກະສັດ ບາບີໂລນ ຍຶດໄວ້.” [4]ຂະນະນັ້ນ ພວກເຈົ້າ
ນາຍໄດ້ທູນກະສັດວ່າ, “ຄົນຜູ້ນີ້ຈະຕ້ອງຖືກໂທດເຖິງຕາຍ ເພາະວ່າລາວໄດ້ເຮັດໃຫ້ທະຫານໃນ
ເມືອງນີ້ເສຍກຳລັງໃຈ ແລະລາວຈະເຮັດຢ່າງດຽວກັນນີ້ອີກຕໍ່ທຸກຄົນທີ່ເຫລືອຢູ່ໃນເມືອງນີ້ ຄົນຜູ້
ນີ້ບໍ່ໄດ້ຄິດຫາທາງຊ່ອຍເຫລືອປະຊາຊົນ ມີແຕ່ຫາຄວາມທຸກຍາກລຳບາກມາໃສ່ພວກເຮົາ.”
[5]ແລ້ວກະສັດ ເຊເດກີຢາ ຊົງກ່າວວ່າ, “ແມ່ນແລ້ວ ພວກເຈົ້າຢາກຈະເຮັດຫຍັງກັບລາວກໍໄດ້ ເຮົາ
ຈະຫ້າມບໍ່ໄດ້ດອກ.” [6]ດັ່ງນັ້ນ ພວກເຈົ້ານາຍຈຶ່ງຈັບ ເຢເຣມີຢາ ຜູກເຊືອກຢ່ອນລົງສ້າງຂີ້ຕົມຂອງ
ເຈົ້າຊາຍ ມັນກີຢາ ທີ່ເດີ່ນພະລາຊະວັງ ເຢເຣມີຢາ ຈຶ່ງຫລົ່ມຢູ່ໃນຕົມນັ້ນ.

[7-8]ເມື່ອ ເອເບັດ-ເມເລັກ ຊາວ ເອທີໂອເປຍ ທີ່ເຮັດວຽກຢູ່ໃນພະລາຊະວັງ ໄດ້ຍິນຂ່າວວ່າ
ພວກເຂົາຈັບ ເຢເຣມີຢາ ຢ່ອນລົງໃນສ້າງ ລາວກໍອອກຈາກພະລາຊະວັງໄປທູນພະລາຊາທີ່ປະຕູ
ເບັນຢາມິນ ວ່າ, [9]“ຂ້າແດ່ພະລາຊາ ຄົນພວກນີ້ໄດ້ເຮັດຊົ່ວຮ້າຍຕໍ່ ເຢເຣມີຢາ ຄືພວກເຂົາໄດ້ຈັບ
ເພິ່ນຂັງໄວ້ໃນສ້າງ ເພິ່ນຈະຕ້ອງອຶດຢາກຕາຍຢູ່ທີ່ນັ້ນ ເພາະວ່າໃນເມືອງນີ້ບໍ່ມີອາຫານເຫລືອຢູ່
ອີກເລີຍ.” [10]ເມື່ອພະລາຊາຊົງຊາບດັ່ງນັ້ນ ກໍຊົງສັ່ງໃຫ້ ເອເບັດ-ເມເລັກ ນຳເອົາສາມສິບຄົນຈາກ
ທີ່ນັ້ນ ໄປດຶງ ເຢເຣມີຢາ ຂຶ້ນມາຈາກສ້າງກ່ອນທີ່ເພິ່ນຈະຕາຍ. [11]ດັ່ງນັ້ນ ເອເບັດ-ເມເລັກ ຈຶ່ງໄດ້
ພາຄົນ ເຫລົ່ານັ້ນໄປຍັງຫ້ອງ ເກັບ ເຄື່ອງທີ່ພະລາຊະວັງ ເພື່ອ ເອົາ ເສື້ອຜ້າທີ່ຂາດ ແລະ ເກົ່າ ແລ້ວ
ຢ່ອນລົງ ໃຫ້ ເຢເຣມີຢາ. [12]ແລະ ເອເບັດ-ເມເລັກ ບອກເພິ່ນວ່າ, “ຈົ່ງ ເອົາຜ້າຂາດນີ້ຮອງຂີ້ແຮ້
ຂອງທ່ານ ເພື່ອບໍ່ໃຫ້ເຊືອກຂາດ” ເຢເຣມີຢາ ກໍໄດ້ເຮັດຕາມ. [13]ແລ້ວພວກເຂົາກໍໄດ້ດຶງເຊືອກ
ເອົາເພິ່ນຂຶ້ນມາຈາກສ້າງ ແລະໃຫ້ຢູ່ໃນເດີ່ນພະລາຊະວັງນັ້ນຕໍ່ໄປ.

## ກະສັດເຊເດກີຢາຂໍຄຳປຶກສາຈາກເຢເຣມີຢາ

[14]ກະສັດ ເຊເດກີຢາ ໄດ້ຊົງຮັບສັ່ງໃຫ້ເອົາ ເຢເຣມີຢາ ຜູ້ປະກາດພຣະທຳເຂົ້າເຝົ້າພະອົງ ຢູ່ທີ່
ທາງເຂົ້າວິຫານປ່ອງທີສາມ ຊົງເວົ້າກັບ ເຢເຣມີຢາ ວ່າ, “ເຮົາຈະຖາມເຈົ້າຈັກຂໍ້ໜຶ່ງ ແລະບໍ່ຢາກ
ໃຫ້ເຈົ້າປິດບັງສິ່ງໃດໄວ້.” [15]ເຢເຣມີຢາ ໄດ້ທູນວ່າ, “ຖ້າຂ້ານ້ອຍທູນຄວາມຈິງ ພະອົງກໍຈະລົງ-
ໂທດຂ້ານ້ອຍເຖິງຕາຍ ແຕ່ຖ້າຖວາຍຄຳປຶກສາ ພະອົງກໍຈະບໍ່ຮັບຟັງຂ້ານ້ອຍ.” [16]ດັ່ງນັ້ນ ກະ-
ສັດ ເຊເດກີຢາ ຈຶ່ງຊົງສັນຍາຕໍ່ ເຢເຣມີຢາ ເປັນການລັບວ່າ, “ພຣະຜູ້ເປັນເຈົ້າຜູ້ຊົງປະທານຊີວິດ
ໃຫ້ເຮົາຊົງພຣະຊົນຢູ່ສັນໃດ ເຮົາຈະບໍ່ລົງໂທດເຈົ້າເຖິງຕາຍ ແລະຈະບໍ່ມອບເຈົ້າໄວ້ໃນກຳມື
ຂອງຄົນທີ່ຢາກຈະຂ້າເຈົ້າສັນນັ້ນ.”

[17]ແລ້ວ ເຢເຣມີຢາ ໄດ້ທູນກະສັດ ເຊເດກີຢາ ວ່າ, “ພຣະຜູ້ເປັນເຈົ້າ ຜູ້ມີອຳນາດຍິ່ງໃຫຍ່ຂອງ
ອິສຣາເອນ ຊົງກ່າວດັ່ງນີ້ ຖ້າພະອົງຊົງຍອມແພ້ພວກເຈົ້ານາຍຂອງກະສັດ ບາບີໂລນ ຊີວິດ
ຂອງພະອົງຈະຊົງປອດໄພ ແລະເມືອງນີ້ກໍຈະບໍ່ຖືກເຜົາພິນາດ ພະອົງກັບພະລາຊະວົງຂອງພະ
ອົງຈະມີຊີວິດຢູ່ ແຕ່ຖ້າບໍ່ຊົງຍອມແພ້ ເມືອງນີ້ຈະຖືກຊາວ ບາບີໂລນ ຍຶດເອົາ. [18]ພວກເຂົາຈະ
ເຜົາມັນໃຫ້ພິນາດ ສ່ວນພະອົງກໍຈະໜີຈາກເງື້ອມມືຂອງພວກເຂົາໄປບໍ່ໄດ້”. [19]ແຕ່ກະສັດ ເຊເດ-
ກີຢາ ຊົງຕອບວ່າ, “ເຮົາຢ້ານຊາວ ຢູດາ ພວກທີ່ລັກໜີໄປຫາຊາວ ບາບີໂລນ ຄືພວກເຂົາອາດ
ມອບເຮົາໃຫ້ແກ່ຄົນ ເຫລົ່ານັ້ນ ແລ້ວພວກເຂົາກໍຈະທໍລະມານເຮົາ.” [20]ເຢເຣມີຢາ ໄດ້ທູນວ່າ,
“ພະອົງຈະບໍ່ຖືກມອບໃຫ້ພວກເຂົາດອກ ຂ້ານ້ອຍຂໍໃຫ້ພະອົງຊົງເຊື່ອຟັງພຣະດຳລັດຂອງ ພຣະ-

ຜູ້ເປັນເຈົ້າ ຕາມທີ່ຂ້ານ້ອຍໄດ້ທູນພະອົງນັ້ນ ແລ້ວທຸກໆ ສິ່ງກໍຈະເປັນໄປດ້ວຍດີສຳລັບພະອົງ
ທັງຊີວິດຂອງພະອົງກໍຈະປອດໄພ. [21]ແຕ່ຖ້າບໍ່ຍອມມອບຕົວ ພະອົງຈະປະສົບຄວາມລຳບາກ
ຕາມນິມິດທີ່ພຣະຜູ້ເປັນເຈົ້າຊົງສະແດງຕໍ່ຂ້ານ້ອຍແລ້ວ. [22]ຄືຜູ້ຍິງທັງປວງທີ່ເຫລືອຢູ່ໃນພະລາ-
ຊະວັງຂອງກະສັດຢູດາ ຈະຖືກນຳອອກໄປມອບໃຫ້ພວກເຈົ້ານາຍຂອງກະສັດບາບີໂລນ ພວກ
ຜູ້ຍິງເຫລົ່ານີ້ຈະກ່າວໃນຂະນະທີ່ໄປວ່າ,

ພະສະຫາຍຜູ້ສະໜິດຂອງກະສັດໄດ້ຫລອກລວງພະອົງ
  ພວກເຂົາໄດ້ບັງຄັບໃຫ້ພະອົງເຮັດຕາມຄວາມຄິດຂອງເຂົາ
ແລະບັດນີ້ ພະອົງໄດ້ຕົກຢູ່ໃນອັນຕະລາຍແລ້ວ
  ພະສະຫາຍກໍຫລີກໜີຈາກພະອົງໄປ."

[23]ຕໍ່ມາເຢເຣມີຢາໄດ້ທູນວ່າ, "ພວກນາງສະໜົມ ພ້ອມດ້ວຍມະເຫສີ ແລະລູກທັງຫລາຍ
ຂອງພະອົງຈະຖືກນຳໄປມອບໃຫ້ຊາວບາບີໂລນ ແລະພະອົງເອງກໍຈະບໍ່ລອດພົ້ນໄປຈາກພວກ
ເຂົາ ຈະຖືກກະສັດບາບີໂລນຈັບໄດ້ ແລະເມືອງນີ້ກໍຈະຖືກເຜົາພິນາດ."

[24]ກະສັດເຊເດກີຢາຊົງຕອບວ່າ, "ຢ່າໃຫ້ຜູ້ໃດຮູ້ຈັກເລື່ອງທີ່ເຈົ້າເວົ້າມານີ້ ຖ້າເຈົ້າບໍ່ໃຫ້ໃຜຮູ້
ຊີວິດຂອງເຈົ້າຈະປອດໄພ. [25]ຖ້າພວກເຈົ້ານາຍຮູ້ວ່າ ເຮົາໄດ້ພົບກັບເຈົ້າ ພວກເຂົາຈະມາຖາມ
ເລື່ອງທີ່ເຮົາເວົ້າກັນນັ້ນ ຄື ເຂົາຈະສັນຍາວ່າຊິບໍ່ຂ້າເຈົ້າ ຖ້າວ່າບອກເລື່ອງທີ່ເຮົາເວົ້າກັນນັ້ນແກ່
ເຂົາ. [26]ແຕ່ຈົ່ງບອກວ່າ ເຈົ້າໄດ້ຂໍຮ້ອງບໍ່ໃຫ້ເຮົາສົ່ງເຈົ້າກັບຄືນໄປຕາຍທີ່ເຮືອນຂອງໂຢນາ-
ທານ." [27]ຕໍ່ມາ ມີພວກເຈົ້ານາຍໄດ້ມາຫາເຢເຣມີຢາ ແລະຖາມເພິ່ນ ເພິ່ນກໍບອກພວກເຂົາ
ຕາມທີ່ພະລາຊາຊົງສັ່ງ ແລ້ວພວກເຂົາກໍບໍ່ຊັກຖາມຫຍັງອີກຕໍ່ໄປ ເພາະວ່າເລື່ອງທີ່ສົນທະນາ
ກັນນັ້ນບໍ່ມີໃຜໄດ້ຍິນ.

[28]ເຢເຣມີຢາຖືກຄວບຄຸມຢູ່ໃນເດີ່ນພະລາຊະວັງ ຈົນຮອດມື້ທີ່ນະຄອນເຢຣູຊາເລັມແຕກ.

# ບົດທີ 39

## ນະຄອນເຢຣູຊາເລັມແຕກ

[1]ເນບູກາດເນັດຊາ ກະສັດບາບີໂລໄດ້ຍົກທັບມາຕີນະຄອນເຢຣູຊາເລັມ ໃນເດືອນທີສິບ ປີ
ທີເກົ້າ ແຫ່ງລາຊະການເຊເດກີຢາ ກະສັດຢູດາ. [2]ຕໍ່ມາ ໃນວັນທີເກົ້າເດືອນສີ່ຂອງປີທີສິບເອັດ
ແຫ່ງລາຊະການເຊເດກີຢາ ນະຄອນເຢຣູຊາເລັມກໍແຕກ. [3](ເມື່ອເຂົາຍຶດນະຄອນເຢຣູຊາເລັມ
ໄດ້ແລ້ວ ບັນດາພວກເຈົ້ານາຍຊັ້ນຜູ້ໃຫຍ່ຂອງກະສັດບາບີໂລນ ຄືເນການ-ຊາເຣັດເຊ ສຳກາ-
ເນໂບ ສາເສກິມ ແລະເຈົ້ານາຍຄົນອື່ນໆ ອີກ ໄດ້ເຂົ້າມາຕັ້ງກອງບັນຊາການຢູ່ທີ່ປະຕູໃຫຍ່
ທາງເຂົ້າເມືອງ). [4]ເມື່ອເຊເດກີຢາກະສັດຢູດາ ກັບທະຫານທັງໝົດຂອງພະອົງໄດ້ເຫັນເຫດ-
ການດັ່ງນີ້ ກໍພາກັນໜີອອກຈາກເມືອງໃນເວລາກາງຄືນທາງພະລາຊະອຸທະຍານ ຜ່ານໄປທາງ
ປະຕູລະຫວ່າງກຳແພງທັງສອງ ແລ້ວໄດ້ມຸ່ງໜ້າໄປທາງຮ່ອມພູຢໍແດນ. [5]ແຕ່ກອງທັບຂອງບາ-
ບີໂລນໄດ້ໄລ່ຕິດຕາມໄປ ແລະໄດ້ໄປທັນກະສັດເຊເດກີຢາຢູ່ໃນທົ່ງພຽງໃກ້ເມືອງເຢຣີໂກ ພວກ
ເຂົາໄດ້ຈັບພະອົງໄວ້ແລ້ວນຳເອົາໄປມອບໃຫ້ກະສັດເນບູກາດເນັດຊາທີ່ເມືອງຣິບລາໃນດິນ-

ແດນຮາມາດ ຢູ່ທີ່ນັ້ນກະສັດເນບູກາດເນັດຊາໄດ້ລົງໂທດພະອົງ. 6ກະສັດບາບີໂລນໄດ້ຕັດ-
ສິນປະຫານຊີວິດພວກລູກຊາຍຂອງເຊເດກີຢາ ຢູ່ທີ່ເມືອງຣິບລາຕໍ່ໜ້າຕໍ່ຕາເຊເດກີຢາເອງ
ແລະໄດ້ຕັດສິນປະຫານຊີວິດພວກເຈົ້ານາຍຂອງຢູດາດ້ວຍ. 7ແລ້ວພະອົງຊົງຄວັດໜ່ວຍຕາ
ຂອງເຊເດກີຢາອອກ ແລະເອົາໂສ້ຜູກເພິ່ນໄວ້ ເພື່ອຈະນຳໄປກຸງບາບີໂລນ 8ທະຫານຊາວບາ-
ບີໂລນໄດ້ເຜົາພະລາຊະວັງ ແລະບ້ານເຮືອນຂອງປະຊາຊົນ ກັບໄດ້ທຳລາຍກຳແພງນະຄອນ
ເຢຣູຊາເລັມຖິ້ມ. 9ແລ້ວເນບູຊາຣາດານຜູ້ບັນຊາການທະຫານໄດ້ຈັບປະຊາຊົນທີ່ເຫລືອຢູ່ໃນ
ເມືອງ ຮ່ວມທັງຄົນທີ່ໜີເຂົ້າມາມອບຕົວຕໍ່ເພິ່ນໄປເປັນຊະເລີຍທີ່ບາບີໂລນ. 10ເນບູຊາຣາດານ
ໄດ້ປະແຕ່ຄົນທຸກຍາກບາງຄົນທີ່ບໍ່ມີໄຮ່ນາໄວ້ໃນປະເທດຢູດາ ພ້ອມທັງໄດ້ມອບສວນອະງຸ່ນ
ແລະໄຮ່ນາໃຫ້ພວກເຂົາດ້ວຍ.

### ເຢເຣມີຢາໄດ້ຮັບອິດສະຫລະພາບ

11ຕໍ່ມາ ເນບູກາດເນັດຊາກະສັດບາບີໂລນ ຊົງບອກເນບູຊາຣາດານຜູ້ບັນຊາການທະຫານ
ວ່າ, 12“ຈົ່ງແຕ່ງຄົນໄປຮັບເອົາເຢເຣມີຢາມາ ແລ້ວເບິ່ງແຍງລາວໃຫ້ດີ ຢ່າທຳຮ້າຍລາວ ແຕ່ຈົ່ງ
ຊິດຊ່ອຍລາວຕາມທີ່ລາວຕ້ອງການ.” 13-14ດັ່ງນັ້ນ ເນບູຊາຣາດານພ້ອມດ້ວຍເຈົ້ານາຍຊັ້ນຜູ້
ໃຫຍ່ສອງຄົນ ຄືເນບູຊັດບານ ແລະເນການ-ຊາເຣັດເຊ ກັບເຈົ້ານາຍຄົນອື່ນໆ ອີກຂອງກະ-
ສັດບາບີໂລນ ຈຶ່ງໃຊ້ຄົນໄປຮັບເອົາເຢເຣມີຢາມາຈາກເດີ່ນພະລາຊະວັງ ພວກເຈົ້ານາຍໄດ້
ມອບເຢເຣມີຢາໄວ້ໃຕ້ການເບິ່ງແຍງຂອງເກດາລີຢາລູກຊາຍອາຮີການ ຫລານຊາຍຂອງຊາ-
ຟານ ໃຫ້ນຳພາເຢເຣມີຢາໄປເຖິງບ້ານເຮືອນ ດ້ວຍເຫດນີ້ ເຢເຣມີຢາຈຶ່ງໄດ້ຢູ່ນຳປະຊາຊົນ.

### ຊົງສັນຍາວ່າຈະຊ່ວຍເອເບັດ-ເມເລັກໃຫ້ພົ້ນ

15ພຣະທຳຂອງພຣະຜູ້ເປັນເຈົ້າມາຍັງເຢເຣມີຢາ ຂະນະທີ່ເພິ່ນຖືກຂັງຢູ່ໃນບໍລິເວນທະຫານ
ຮັກສາພະອົງວ່າ 16“ຈົ່ງໄປບອກເອເບັດ-ເມເລັກຄົນເອທີໂອເປຍວ່າ ພຣະຜູ້ເປັນເຈົ້າຈອມໂຍ-
ທາ ພຣະເຈົ້າແຫ່ງອິສຣາເອນກ່າວດັ່ງນີ້ວ່າ ເບິ່ງແມ ເຮົາຈະໃຫ້ຖ້ອຍຄຳຂອງເຮົາທີ່ມີຢູ່ຕໍ່ກຸງນີ້
ສຳເລັດໃນທາງຮ້າຍ ບໍ່ແມ່ນທາງດີ ແລະຈະສຳເລັດຕໍ່ໜ້າເຈົ້າໃນມື້ນັ້ນ 17ພຣະຜູ້ເປັນເຈົ້າກ່າວ
ວ່າ ແຕ່ເຮົາຈະຊ່ວຍເຈົ້າໃຫ້ພົ້ນໃນມື້ນັ້ນ ແລະເຂົາຈະບໍ່ມອບເຈົ້າໄວ້ໃນມືຂອງຄົນທີ່ເຈົ້າຢ້ານກົວ
18ເພາະເຮົາຈະຊ່ວຍເຈົ້າໃຫ້ພົ້ນແນ່ນອນ ແລະເຈົ້າຈະບໍ່ລົ້ມລົງດ້ວຍດາບ ແຕ່ເຈົ້າຈະມີຊີວິດເປັນ
ບຳເໜັດແຫ່ງການສົງຄາມ ເພາະເຈົ້າໄດ້ໄວ້ວາງໃຈໃນເຮົາ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ”

# ບົດທີ 40

## ເຢເຣມີຢາຜູ້ປະກາດພຣະທຳທ່າມກາງປະຊາຊົນຊຶ່ງເຫລືອຢູ່ໃນຢູດາ

1ພຣະທຳຊຶ່ງມາຈາກພຣະຜູ້ເປັນເຈົ້າເຖິງເຢເຣມີຢາ ຫລັງຈາກທີ່ເນບູຊາຣາດານຜູ້ບັນຊາ
ການທະຫານຮັກສາພະອົງໄດ້ປ່ອຍເພິ່ນໄປຈາກຣາມາ. ເມື່ອລາວຈັບເພິ່ນໃສ່ໂສ້ມາພ້ອມກັບ
ບັນດາຊະເລີຍຈາກກຸງເຢຣູຊາເລັມແລະຢູດາ ຜູ້ທີ່ຖືກກວາດໄປເປັນຊະເລີຍຍັງບາບີໂລນ 2ຜູ້
ບັນຊາການທະຫານຮັກສາພະອົງໄດ້ນຳເຢເຣມີຢາມາແລ້ວເວົ້າກັບເພິ່ນວ່າ “ພຣະຜູ້ເປັນເຈົ້າ
ພຣະເຈົ້າຂອງທ່ານຊົງປະກາດຄວາມຮ້າຍນີ້ຕໍ່ສະຖານທີ່ນີ້ 3ພຣະຜູ້ເປັນເຈົ້າຊົງເຮັດໃຫ້ເປັນໄປ

ແລະຊົງກະທຳຕາມທີ່ພຣະອົງກ່າວໄວ້ ເພາະທ່ານທັງຫລາຍໄດ້ເຮັດບາບຕໍ່ພຣະຜູ້ເປັນເຈົ້າ
ແລະບໍ່ເຊື່ອຟັງພຣະສຸລະສຽງຂອງພຣະອົງ ສິ່ງນີ້ຈຶ່ງໄດ້ເປັນມາເໜືອທ່ານ [4]ເບິ່ງແມ ມື້ນີ້ຂ້າພະ-
ເຈົ້າປ່ອຍທ່ານຈາກໂສ້ທີ່ມືຂອງທ່ານ ຖ້າທ່ານຍິນດີທີ່ຈະມາຍັງກຸງບາບີໂລນກັບຂ້າພະເຈົ້າ ກໍ
ຈົ່ງມາເຖີດ ຂ້າພະເຈົ້າຈະເບິ່ງແຍງທ່ານໃຫ້ດີ ແຕ່ຖ້າທ່ານບໍ່ເຫັນພ້ອມທີ່ຈະມາຍັງກຸງບາບີໂລນ
ກັບຂ້າພະເຈົ້າ ກໍຢ່າມາ ແຜ່ນດິນທັງໝົດນີ້ຢູ່ຕໍ່ໜ້າທ່ານ ທ່ານຈະໄປທີ່ໃດກໍໄດ້ຕາມແຕ່ທ່ານ
ເຫັນດີເຫັນງາມທີ່ຈະໄປ" [5]ຂະນະເມື່ອເພິ່ນຍັງບໍ່ໄປເທື່ອ ລາວກ່າວວ່າ "ທ່ານຈົ່ງກັບໄປຫາເກ-
ດາລີຢາລູກຊາຍອາຮີກາມ ຜູ້ເປັນລູກຊາຍຊາຟານ ຜູ້ຊຶ່ງກະສັດແຫ່ງບາບີໂລນໄດ້ແຕ່ງຕັ້ງໃຫ້
ເປັນຜູ້ວ່າລາຊະການບັນດາຫົວເມືອງຢູດາ ແລະຢູ່ກັບລາວທ່າມກາງປະຊາຊົນ ຫລືຈະໄປບ່ອນ
ໃດທີ່ທ່ານເຫັນດີຈະໄປກໍໄດ້" ຜູ້ບັນຊາການທະຫານຮັກສາພະອົງຈຶ່ງສັ່ງອະນຸມັດສະບຽງ ແລະ
ໃຫ້ຂອງຂວັນແກ່ເຢເຣມີຢາ ແລ້ວກໍປ່ອຍເພິ່ນໄປ [6]ເຢເຣມີຢາກໍໄປຫາເກດາລີຢາ ລູກຊາຍ
ອາຮີກາມທີ່ມິດຊະປາ ແລະອາໄສຢູ່ກັບລາວທ່າມກາງປະຊາຊົນຊຶ່ງເຫລືອຢູ່ໃນແຜ່ນດິນນັ້ນ
[7]ເມື່ອບັນດາຫົວໜ້າຂອງກອງທະຫານໃນທົ່ງນາ ຄືພວກເຂົາ ແລະຄົນຂອງພວກເຂົາທັງ-
ຫລາຍໄດ້ຍິນວ່າ ກະສັດແຫ່ງບາບີໂລນໄດ້ແຕ່ງຕັ້ງເກດາລີຢາລູກຊາຍອາຮີກາມໃຫ້ເປັນຜູ້ວ່າ
ລາຊະການໃນແຜ່ນດິນນັ້ນ ແລະໄດ້ມອບຊາຍຍິງກັບເດັກນ້ອຍຜູ້ທີ່ເປັນຄົນຈົນໃນແຜ່ນດິນ ຊຶ່ງ
ບໍ່ໄດ້ຖືກກວາດໄປເປັນຊະເລີຍຍັງບາບີໂລນໄວ້ໃຫ້ລາວດ້ວຍ [8]ພວກເຂົາກໍໄປຫາເກດາລີຢາທີ່
ມິດຊະປາ ມີອິດຊະມາເອນລູກຊາຍເນທານີອາ ໂຢຮານານ ແລະໂຢນາທານລູກຊາຍກາ-
ເຣອາ ເສຣາຢາລູກຊາຍຕັນຮູເມັດ ບັນດາລູກຊາຍຂອງເອຟາຍຊາວເນໂຕຟາ ເຢຊານີຢາ
ລູກຊາຍຊາວມາອາກາ ທັງຕົວພວກເຂົາ ແລະຄົນຂອງເຂົາ [9]ເກດາລີຢາລູກຊາຍອາຮີກາມ
ຜູ້ເປັນລູກຊາຍຊາຟານກໍໄດ້ປະຕິຍານໃຫ້ແກ່ພວກເຂົາ ແລະຄົນຂອງເຂົາ ກ່າວວ່າ "ຢ່າຢ້ານ
ກົວທີ່ຈະບົວລະບັດຄົນບາບີໂລນ ຈົ່ງອາໄສຢູ່ໃນແຜ່ນດິນ ແລະບົວລະບັດກະສັດແຫ່ງບາບີ-
ໂລນ ແລ້ວທ່ານທັງຫລາຍກໍຈະຢູ່ເຢັນເປັນສຸກ [10]ສ່ວນຕົວຂ້າພະເຈົ້າ ຂ້າພະເຈົ້າຈະອາໄສຢູ່ທີ່
ມິດຊະປາ ເພື່ອຈະບົວລະບັດຄົນບາບີໂລນ ຜູ້ຊຶ່ງຈະມາຫາເຮົາ ແຕ່ຝ່າຍທ່ານຈົ່ງເກັບນໍ້າອະງຸ່ນ
ໝາກໄມ້ລະດູຮ້ອນ ນໍ້າມັນ ແລະເກັບໄວ້ໃນພາຊະນະ ແລະຈົ່ງຢູ່ໃນຫົວເມືອງຊຶ່ງທ່ານຍຶດໄດ້
ນັ້ນ" [11]ໃນທຳນອງດຽວກັນ ເມື່ອພວກຊາວຢິວທັງຫລາຍ ຊຶ່ງຢູ່ທີ່ໂມອາບ ທ່າມກາງຄົນອຳ-
ໂມນ ແລະໃນເອໂດມແລະໃນແຜ່ນດິນອື່ນໆທັງໝົດ ໄດ້ຍິນວ່າກະສັດແຫ່ງບາບີໂລນໄດ້ຖິ້ມ
ຄົນໃຫ້ເຫລືອໄວ້ສ່ວນໜຶ່ງໃນຢູດາ ແລະໄດ້ແຕ່ງຕັ້ງໃຫ້ເກດາລີຢາລູກຊາຍອາຮີກາມ ຜູ້ເປັນ
ລູກຊາຍຊາຟານໃຫ້ເປັນຜູ້ວ່າລາຊະການເໜືອພວກເຂົາ [12]ແລ້ວພວກຊາວຢິວທັງປວງກໍໄດ້ກັບ
ມາຈາກທຸກທີ່ຊຶ່ງພວກເຂົາຖືກຂັບໄລ່ໃຫ້ໄປຢູ່ນັ້ນ ມາຍັງແຜ່ນດິນຢູດາມາຫາເກດາລີຢາທີ່ມິດ-
ຊະປາ ແລະພວກເຂົາທັງຫລາຍໄດ້ເກັບນໍ້າອະງຸ່ນ ໝາກໄມ້ໃນລະດູຮ້ອນໄດ້ເປັນຈຳນວນ
ຫລາຍ

## ອິດຊະມາເອນວາງແຜນຮ້າຍຂ້າເກດາລີຢາ

[13]ຝ່າຍໂຢຮານານລູກຊາຍຂອງກາເຣອາ ແລະບັນດາຫົວໜ້າຂອງກອງທະຫານໃນທົ່ງນາ
ໄດ້ມາຫາເກດາລີຢາທີ່ມິດຊະປາ [14]ແລະກ່າວແກ່ລາວວ່າ "ທ່ານຮູ້ຫລືບໍ່ວ່າ ບາອາລິດ ກະສັດ

ຂອງຄົນ ອຳໂມນ ໄດ້ສົ່ງໃຫ້ ອິດຊະມາເອນ ລູກຊາຍ ເນທານີອາ ມາເອົາຊີວິດຂອງທ່ານ” ຝ່າຍ
ເກດາລີຢາ ລູກຊາຍ ອາຮີກາມ ບໍ່ເຊື່ອພວກເຂົາ 15ແລ້ວ ໂຢຮານານ ລູກຊາຍ ກາເຣອາ ໄດ້ເວົ້າກັບ
ເກດາລີຢາ ເປັນການລັບທີ່ ມິດຊະປາ ວ່າ “ຈົ່ງໃຫ້ຂ້າພະເຈົ້າໄປຂ້າ ອິດຊະມາເອນ ລູກຊາຍ ເນ-
ທານີອາ ເສຍ ແລະຈະບໍ່ມີໃຜຮູ້ເລື່ອງ ເປັນຫຍັງຈະໃຫ້ລາວເອົາຊີວິດຂອງທ່ານ ແລ້ວຊາວຢິວ
ທັງຫລາຍຊຶ່ງມາຮ່ວມຢູ່ກັບລາວຈະກະຈັດກະຈາຍກັນໄປ ແລະຄົນ ຢູດາ ທີ່ ເຫລືອຢູ່ນີ້ກໍຈະພິ-
ນາດ” 16ແຕ່ ເກດາລີຢາ ລູກຊາຍ ອາຮີກາມ ເວົ້າກັບ ໂຢຮານານ ລູກຊາຍ ກາເຣອາ ວ່າ “ທ່ານຢ່າ
ເຮັດສິ່ງນີ້ເລີຍ ເພາະທີ່ທ່ານເວົ້າເຖິງ ອິດຊະມາເອນ ນັ້ນເປັນຄວາມບໍ່ຈິງ”

# ບົດທີ 41

## ອິດຊະມາເອນຂ້າເກດາລີຢາ

1ຕໍ່ມາໃນເດືອນທີ່ເຈັດ ອິດຊະມາເອນ ລູກຊາຍ ເນທານີອາ ຜູ້ເປັນລູກຊາຍ ເອລີຊາມາ ເຊື້ອ
ພະວົງ ພ້ອມກັບເຈົ້ານາຍສິບຄົນຂອງກະສັດ ໄດ້ມາຫາ ເກດາລີຢາ ລູກຊາຍ ອາຮີກາມ ທີ່ ມິດ-
ຊະປາ ແລ້ວພວກເຂົາຮັບປະທານອາຫານຢູ່ນຳກັນທີ່ ມິດຊະປາ 2ແລ້ວ ອິດຊະມາເອນ ລູກຊາຍ
ເນທານີອາ ກັບຄົນທັງສິບທີ່ຢູ່ກັບລາວກໍໄດ້ລຸກຂຶ້ນຂ້າ ເກດາລີຢາ ລູກຊາຍ ອາຮີກາມ ຜູ້ເປັນລູກ
ຊາຍ ຊາຟານ ຜູ້ທີ່ກະສັດແຫ່ງ ບາບີໂລນ ໄດ້ແຕ່ງຕັ້ງໃຫ້ເປັນຜູ້ວ່າລາຊະການທີ່ແຜ່ນດິນນັ້ນເສຍ
ດ້ວຍດາບຈົນຕາຍ 3ອິດຊະມາເອນ ໄດ້ຂ້າຊາວ ຢິວ ທັງຫລາຍທີ່ຢູ່ກັບ ເກດາລີຢາ ທີ່ ມິດຊະປາ
ແລະຄົນ ບາບີໂລນ ຊຶ່ງໄດ້ພົບຢູ່ບ່ອນນັ້ນພ້ອມກັບພວກທະຫານດ້ວຍ

4ຕໍ່ມາອີກສອງມື້ຫລັງຈາກມື້ທີ່ ເກດາລີຢາ ຖືກຂ້າກ່ອນທີ່ໃຜໆຈະຮູ້ເລື່ອງ 5ມີຊາຍແປດສິບຄົນ
ມາຈາກເມືອງ ເຊເຄັມ ເມືອງຊີໂລ ແລະເມືອງຊາມາເຣຍ ມີໜວດເຄົາແຖ ເສື້ອຜ້າຂາດ ແລະ
ຂີດຕົວເອງ ນຳເຄື່ອງບູຊາພືດຜົນເປັນເມັດ ແລະກຳຍານມາຖວາຍທີ່ພຣະນິເວດຂອງ ພຣະຜູ້-
ເປັນເຈົ້າ 6ແລະ ອິດຊະມາເອນ ລູກຊາຍ ເນທານີອາ ມາຈາກ ມິດຊະປາ ພົບພວກເຂົາ ເຫລົ່ານັ້ນ
ອິດຊະມາເອນຍ່າງມາທັງຮ້ອງໄຫ້ ແລະເວົ້າກັບພວກເຂົາທັງຫລາຍວ່າ “ເຊີນເຂົ້າມາຫາ ເກດາ-
ລີຢາ ລູກຊາຍ ອາຮີກາມ ເຖີດ” 7ເມື່ອພວກເຂົາເຂົ້າມາໃນເມືອງ ອິດຊະມາເອນ ລູກຊາຍ ເນທາ-
ນີອາ ແລະຄົນທີ່ຢູ່ກັບຕົນກໍຂ້າພວກເຂົາ ແລະໂຍນລົງໄປໃນບ່ອນຂັງນໍ້າ 8ແຕ່ໃນພວກນັ້ນມີຢູ່
ສິບຄົນນຳກັນທີ່ເວົ້າກັບ ອິດຊະມາເອນວ່າ “ຂໍຢ່າຂ້າເຮົາເລີຍ ເພາະເຮົາມີເຄື່ອງມີຄ່າ ຄືເຂົ້າວີດ
ເຂົ້າບາເລ ນໍ້າມັນ ແລະນໍ້າເຜິ້ງເຊື່ອງໄວ້ໃນທົ່ງນາ” ດັ່ງນັ້ນ ລາວຈຶ່ງງົດບໍ່ຂ້າພວກເຂົາກັບພີ່-
ນ້ອງຂອງພວກເຂົາ 9ບ່ອນຂັງນໍ້າຊຶ່ງ ອິດຊະມາເອນ ໂຍນສົບທັງປວງຂອງຜູ້ທີ່ຕົນຂ້າຕາຍລົງໄປ
ເພາະເຫດ ເກດາລີຢານັ້ນ ເປັນບ່ອນທີ່ກະສັດ ອາຊາ ສ້າງໄວ້ເພື່ອປ້ອງກັນ ບາອາຊາ ກະສັດແຫ່ງ
ອິສຣາເອນ ອິດຊະມາເອນ ລູກຊາຍ ເນທານີອາກໍໃສ່ຄົນທີ່ຖືກຂ້າໄວ້ຈົນເຕັມ 10ແລ້ວ ອິດຊະ-
ມາເອນກໍຈັບຄົນທັງໝົດທີ່ເຫລືອຢູ່ໃນ ມິດຊະປາ ໄປເປັນຊະເລີຍ ຄືພວກລາຊະທິດາ ແລະປະ-
ຊາຊົນທັງປວງທີ່ເຫລືອຢູ່ໃນ ມິດຊະປາ ຜູ້ທີ່ ເນບູຊາຣາດານ ຜູ້ບັນຊາການທະຫານຮັກສາພະ
ອົງໄດ້ມອບໝາຍໃຫ້ແກ່ ເກດາລີຢາ ລູກຊາຍ ອາຮີກາມ ອິດຊະມາເອນ ລູກຊາຍ ເນທານີອາ ໄດ້
ຈັບພວກເຂົາເປັນຊະເລີຍ ແລະອອກຍ່າງຂ້າມຟາກໄປຫາຄົນ ອຳໂມນ

### ໂຢຮານານຊ່ວຍພວກຊະເລີຍໃຫ້ລອດພົ້ນ

11ແຕ່ເມື່ອ ໂຢຮານານ ລູກຊາຍ ກາເຣອາ ແລະບັນດາຫົວໜ້າຂອງກອງທະຫານຊຶ່ງຢູ່ກັບລາວ
ໄດ້ ຍິນ ເລື່ອງ ຄວາມ ຊົ່ວ ຮ້າຍ ທັງຫລາຍ ຊຶ່ງ ອິດຊະມາເອນ ລູກ ຊາຍ ເນທານີອາ ໄດ້ ເຮັດ ນັ້ນ
12ພວກເຂົາກໍຈັດ ເອົາຄົນທັງໝົດຂອງຕົນໄປຕໍ່ສູ້ກັບ ອິດຊະມາເອນ ລູກຊາຍ ເນທານີອາ ພວກ
ເຂົາປະທະລາວທີ່ສະໃຫຍ່ ຊຶ່ງຢູ່ເມືອງ ກິເບໂອນ 13ແລະຕໍ່ມາເມື່ອປະຊາຊົນທັງປວງຜູ້ຊຶ່ງຢູ່ກັບ
ອິດຊະມາເອນ ເຫັນ ໂຢຮານານ ລູກຊາຍ ກາເຣອາ ແລະບັນດາຫົວໜ້າກອງທະຫານທີ່ຢູ່ກັບລາວ
ພວກເຂົາກໍປິຕິຍິນດີ 14ປະຊາຊົນທັງປວງຊຶ່ງ ອິດຊະມາເອນ ຈັບເປັນຊະເລີຍຈາກ ມິດຊະປາ ຈຶ່ງ
ຫັນຫລັງ ແລະກັບໄປ ພວກເຂົາໄປຫາ ໂຢຮານານ ລູກຊາຍ ກາເຣອາ 15ແຕ່ ອິດຊະມາເອນ ລູກ
ຊາຍ ເນທານີອາ ໄດ້ໜີລອດພົ້ນຈາກ ໂຢຮານານ ພ້ອມກັບຊາຍແປດຄົນໄປຫາຄົນ ອຳໂມນ

16ແລ້ວ ໂຢຮານານ ລູກຊາຍ ກາເຣອາ ແລະບັນດາຫົວໜ້າຂອງກອງທະຫານຊຶ່ງຢູ່ກັບລາວ
ໄດ້ນຳປະຊາຊົນທີ່ເຫລືອຢູ່ທັງໝົດ ຊຶ່ງເອົາກັບຄືນມາຈາກ ອິດຊະມາເອນ ລູກຊາຍ ເນທານີອາທີ່
ມາຈາກ ມິດຊະປາ ຫລັງຈາກທີ່ໄດ້ຂ້າ ເກດາລີຢາ ລູກຊາຍ ອາຮີກາມ ແລ້ວນັ້ນ ຄືທະຫານ ຜູ້ຍິງ
ເດັກນ້ອຍ ແລະຊາຍຕອນ ຜູ້ຊຶ່ງ ໂຢຮານານ ນຳກັບມາຍັງ ກິເບໂອນ 17ພວກເຂົາທັງຫລາຍກໍໄປ
ຢູ່ໃນບ່ອນອາໄສຂອງ ກິມຮາມ ໃກ້ ເບັດເລເຮັມ ຕັ້ງໃຈຈະໄປຍັງ ເອຢິບ 18ເນື່ອງດ້ວຍຄົນ ບາ-
ບີໂລນ ເພາະພວກເຂົາຢ້ານ ເພາະວ່າ ອິດຊະມາເອນ ລູກຊາຍ ເນທານີອາ ໄດ້ຂ້າ ເກດາລີຢາ ລູກ
ຊາຍ ອາຮີກາມ ຜູ້ຊຶ່ງກະສັດແຫ່ງ ບາບີໂລນ ໄດ້ຕັ້ງໃຫ້ເປັນຜູ້ວ່າລາຊະການເໜືອແຜ່ນດິນນັ້ນ

## ບົດທີ 42

### ຄົນຢູດາທີ່ເຫລືອຢູ່ຂໍຄຳແນະນຳຈາກເຢເຣມີຢາ ແຕ່ໄດ້ປະຕິເສດຄຳແນະນຳນັ້ນ

1ບັນດາຫົວໜ້າຂອງກອງທະຫານ ແລະ ໂຢຮານານ ລູກຊາຍ ກາເຣອາ ແລະ ເຢຊານີຢາ ລູກ
ຊາຍ ໂຮຊາຢາ ແລະປະຊາຊົນທັງປວງຈາກຜູ້ນ້ອຍທີ່ສຸດເຖິງຜູ້ໃຫຍ່ທີ່ສຸດໄດ້ເຂົ້າມາໃກ້ 2ແລະ
ເວົ້າກັບ ເຢເຣມີຢາ ຜູ້ປະກາດພຣະທຳວ່າ "ຂໍໃຫ້ຄຳອ້ອນວອນຂອງຂ້າພະເຈົ້າທັງຫລາຍ ເປັນທີ່
ຍອມຮັບຕໍ່ໜ້າທ່ານ ແລະຂໍທ່ານອະທິຖານຕໍ່ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງທ່ານ ເພື່ອ ເຮົາທັງ-
ຫລາຍ ເພື່ອຄົນທີ່ເຫລືອຢູ່ທັງໝົດ (ເພາະເຮົາມີເຫລືອໜ້ອຍຈາກຄົນຫລວງຫລາຍ ຕາມທີ່ທ່ານ
ເຫັນຢູ່ກັບຕາແລ້ວ) 3ຂໍ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງທ່ານສະແດງຫົນທາງ ແກ່ເຮົາວ່າ ເຮົາ
ຄວນຈະໄປທາງໃດ ແລະຂໍສະແດງສິ່ງທີ່ເຮົາຄວນຈະເຮັດ" 4ເຢເຣມີຢາ ຜູ້ປະກາດພຣະທຳກ່າວ
ແກ່ເຂົາທັງຫລາຍວ່າ "ຂ້າພະເຈົ້າໄດ້ຍິນທ່ານແລ້ວ ເບິ່ງແມ ຂ້າພະເຈົ້າຈະອະທິຖານຕໍ່ ພຣະຜູ້-
ເປັນເຈົ້າ ພຣະເຈົ້າ ຂອງທ່ານຕາມຄຳຂໍຮ້ອງຂອງທ່ານທັງຫລາຍ ແລະຕໍ່ມາ ພຣະຜູ້ເປັນເຈົ້າ ຈະ
ຊົງຕອບທ່ານປະການໃດ ຂ້າພະເຈົ້າຈະບອກແກ່ທ່ານ ຂ້າພະເຈົ້າຈະບໍ່ປິດບັງສິ່ງໃດໄວ້ຈາກ
ທ່ານເລີຍ" 5ແລ້ວພວກເຂົາເວົ້າກັບ ເຢເຣມີຢາວ່າ "ຂໍ ພຣະຜູ້ເປັນເຈົ້າ ຈົ່ງເປັນພະຍານທີ່ສັດຈິງ
ແລະ ສັດຊື່ ໃນ ລະຫວ່າງ ຂ້າພະເຈົ້າທັງຫລາຍ ຖ້າຂ້າພະເຈົ້າທັງຫລາຍບໍ່ ໄດ້ ເຮັດຕາມບັນດາ
ພຣະທຳຂອງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງທ່ານຜູ້ຊົງໃຊ້ທ່ານ 6ບໍ່ວ່າຈະດີຫລືຮ້າຍ ຂ້າພະເຈົ້າ
ທັງຫລາຍຈະ ເຊື່ອຟັງພຣະສຸລະສຽງຂອງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງ ເຮົາ ຜູ້ຊຶ່ງຂ້າພະເຈົ້າ

ທັງຫລາຍສົ່ງທ່ານໃຫ້ໄປຫານັ້ນ ເພື່ອເຮົາຈະຢູ່ເຢັນເປັນສຸກ ເມື່ອເຮົາເຊື່ອຟັງພຣະສຸລະສຽງ
ແຫ່ງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງເຮົາ”
7ຕໍ່ມາ ຄັນສິ້ນສຸດສິບວັນແລ້ວ ພຣະທຳຂອງ ພຣະຜູ້ເປັນເຈົ້າ ກໍມາຍັງ ເຢເຣມີຢາ 8ແລ້ວທ່ານ
ຈຶ່ງໃຫ້ໄປຕາມຕົວ ໂຢຮານານ ລູກຊາຍ ກາເຣອາ ແລະບັນດາຫົວໜ້າຂອງກອງທະຫານຜູ້ຢູ່ກັບ
ທ່ານ ແລະປະຊາຊົນທັງປວງຕັ້ງແຕ່ຄົນນ້ອຍທີ່ສຸດເຖິງຄົນໃຫຍ່ທີ່ສຸດ 9ແລະບອກພວກເຂົາທັງ-
ຫລາຍວ່າ “ພຣະຜູ້ເປັນເຈົ້າ ພຣະເຈົ້າ ແຫ່ງ ອິສຣາເອນ ຜູ້ຊຶ່ງທ່ານໄດ້ໃຊ້ໃຫ້ຂ້າພະເຈົ້ານຳເອົາ
ຄຳອ້ອນວອນຂອງທ່ານໄປສະເໜີຕໍ່ພຣະພັກພຣະອົງນັ້ນ ໄດ້ກ່າວດັ່ງນີ້ວ່າ 10ຖ້າເຈົ້າທັງຫລາຍ
ຈະຢູ່ຕໍ່ໄປໃນແຜ່ນດິນນີ້ ເຮົາຈະສ້າງເຈົ້າທັງຫລາຍຂຶ້ນ ແລະບໍ່ທຳລາຍລົງ ເຮົາຈະປູກເຈົ້າໄວ້
ແລະບໍ່ຖອນເຈົ້າເສຍ ເພາະເຮົາໄດ້ກັບໃຈຈາກເຫດຮ້າຍຊຶ່ງເຮົາໄດ້ເຮັດໄປແລ້ວ 11ຢ່າຢ້ານກະ-
ສັດ ແຫ່ງ ບາບີໂລນ ຜູ້ຊຶ່ງເຈົ້າຢ້ານກົວຢູ່ນັ້ນ ພຣະຜູ້ເປັນເຈົ້າ ກ່າວວ່າ ຢ່າຢ້ານລາວເລີຍ ເພາະ
ເຮົາຢູ່ກັບເຈົ້າທັງຫລາຍເພື່ອຊ່ວຍເຈົ້າໃຫ້ລອດພົ້ນ ແລະຊ່ວຍເຈົ້າໃຫ້ພົ້ນຈາກມືຂອງລາວ 12ເຮົາ
ຈະໃຫ້ຄວາມກະລຸນາແກ່ເຈົ້າ ເພື່ອລາວຈະໄດ້ກະລຸນາເຈົ້າ ແລະຍອມໃຫ້ເຈົ້າກັບໄປຢູ່ໃນແຜ່ນ-
ດິນຂອງເຈົ້າເອງ
13ແຕ່ຖ້າເຈົ້າທັງຫລາຍເວົ້າວ່າ ‘ເຮົາຈະບໍ່ຢູ່ໃນແຜ່ນດິນນີ້’ ໂດຍບໍ່ເຊື່ອຟັງພຣະສຸລະສຽງຂອງ
ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງເຈົ້າ 14ແລະກ່າວວ່າ ‘ບໍ່ເອົາ ເຮົາຈະເຂົ້າໄປໃນແຜ່ນດິນ ເອຢິບ
ບ່ອນທີ່ເຮົາຈະບໍ່ເຫັນສົງຄາມ ຈະບໍ່ໄດ້ຍິນສຽງເຂົາສັດ ຈະບໍ່ຫິວເຂົ້າໜົມປັງ ແລະເຮົາທັງ-
ຫລາຍຈະອາໄສຢູ່ບ່ອນນັ້ນ’ 15ເພາະສະນັ້ນ ບັດນີ້ ຄົນ ຢູດາ ທີ່ເຫລືອຢູ່ ຂໍຟັງພຣະທຳຂອງ
ພຣະຜູ້ເປັນເຈົ້າ ພຣະຜູ້ເປັນເຈົ້າ ຈອມໂຍທາ ພຣະເຈົ້າ ຂອງ ອິສຣາເອນ ກ່າວດັ່ງນີ້ວ່າ ຖ້າ
ເຈົ້າມຸ່ງໜ້າຈະເຂົ້າ ເອຢິບ ແລະໄປອາໄສໃນບ່ອນນັ້ນ 16ແລ້ວຕໍ່ມາ ດາບຊຶ່ງເຈົ້າຢ້ານກົວຢູ່ນັ້ນ
ຈະຕາມທັນເຈົ້າບ່ອນນັ້ນໃນແຜ່ນດິນ ເອຢິບ ແລະການກັນດານອາຫານຊຶ່ງເຈົ້າຢ້ານກົວຢູ່ນັ້ນຈະ
ຕິດຕາມ ເຈົ້າ ໄປ ເຖິງ ເອຢິບ ແລະ ເຈົ້າ ຈະ ຕາຍ ໃນ ບ່ອນ ນັ້ນ 17ທຸກຄົນຊຶ່ງມຸ້ງໜ້າໄປຍັງ ເອຢິບ
ເພື່ອຈະຢູ່ບ່ອນນັ້ນຈະຕາຍເສຍດ້ວຍດາບ ດ້ວຍການອຶດຫິວອາຫານ ດ້ວຍພະຍາດລະບາດ ຈະ
ບໍ່ມີຄົນທີ່ເຫລືອຢູ່ ຫລືທີ່ລອດພົ້ນຈາກເຫດຮ້າຍຊຶ່ງເຮົາຈະນຳມາເໜືອພວກເຂົາ 18ເພາະ ພຣະຜູ້-
ເປັນເຈົ້າ ຈອມໂຍທາ ພຣະເຈົ້າ ແຫ່ງ ອິສຣາເອນ ກ່າວດັ່ງນີ້ວ່າ ເຮົາຖອກພຣະພິໂລດຂອງເຮົາ
ແລະຄວາມໂກດຮ້າຍຂອງເຮົາລົງເໜືອຊາວ ເຢຣູຊາເລັມ ຢ່າງໃດ ເຮົາຈະຖອກພຣະພິໂລດຂອງ
ເຮົາເໜືອເຈົ້າທັງຫລາຍ ເມື່ອເຈົ້າຈະເຂົ້າໄປຍັງ ເອຢິບ ຢ່າງນັ້ນ ເຈົ້າຈະເປັນຄຳສາບແຊ່ງ ເປັນ
ທີ່ໜ້າປະຫລາດໃຈ ເປັນຄຳສາບແຊ່ງແລະເປັນທີ່ນິນທາ ເຈົ້າຈະບໍ່ເຫັນບ່ອນນີ້ອີກ
19ຄົນ ຢູດາ ທີ່ຍັງເຫລືອຢູ່ເອີຍ ພຣະຜູ້ເປັນເຈົ້າ ໄດ້ກ່າວເລື່ອງທ່ານແລ້ວວ່າ ‘ຢ່າໄປຍັງ ເອຢິບ’
ຈົ່ງຮູ້ວ່າ ໃນມື້ນີ້ຂ້າພະເຈົ້າໄດ້ຕັກເຕືອນທ່ານ 20ວ່າທ່ານທັງຫລາຍໄດ້ຫລົງເຮັດບາບໄປໃນໃຈ
ຂອງທ່ານເອງ ເພາະທ່ານໄດ້ໃຊ້ຂ້າພະເຈົ້າໄປຫາ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງທ່ານວ່າ ‘ຂໍ
ອະທິຖານ ເພື່ອ ເຮົາຕໍ່ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງ ເຮົາ ແລະ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງ
ເຮົາຈະກ່າວປະການໃດ ຂໍບອກແກ່ເຮົາ ແລະເຮົາຈະເຮັດຕາມ’ 21ໃນມື້ນີ້ ຂ້າພະເຈົ້າໄດ້ປະ-
ກາດພຣະທຳນັ້ນແກ່ທ່ານທັງຫລາຍແລ້ວ ແຕ່ທ່ານບໍ່ໄດ້ເຊື່ອຟັງພຣະສຸລະສຽງ ແຫ່ງ ພຣະຜູ້ເປັນ-

ເຈົ້າ ພຣະເຈົ້າ ຂອງທ່ານໃນສິ່ງໃດໆ ຊຶ່ງພຣະອົງຊົງໃຊ້ຂ້າພະເຈົ້າມາບອກທ່ານ 22ເພາະສະນັ້ນ
ບັດນີ້ຈົ່ງຮູ້ສາວ່າ ທ່ານທັງຫລາຍຈະຕາຍດ້ວຍດາບ ດ້ວຍການອຶດຫິວອາຫານ ແລະດ້ວຍພະ-
ຍາດລະບາດ ໃນສະຖານທີ່ຊຶ່ງທ່ານທັງຫລາຍປາດຖະໜາຈະໄປອາໄສຢູ່"

# ບົດທີ 43

## ເຢເຣມີຢາໄປຍັງເອຢິບພ້ອມກັບພວກທີ່ເຫລືອຢູ່

1ຕໍ່ມາເມື່ອ ເຢເຣມີຢາ ຈົບການເວົ້າຕໍ່ປະຊາຊົນທັງປວງເຖິງພຣະທຳເຫລົ່ານີ້ຂອງ ພຣະຜູ້ເປັນ-
ເຈົ້າ ພຣະເຈົ້າ ຂອງພວກເຂົາທັງຫລາຍ ຊຶ່ງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງ ເຂົາໄດ້ຊົງໃຊ້ທ່ານໃຫ້
ໄປເວົ້າພຣະທຳທັງໝົດນີ້ກັບພວກເຂົາແລ້ວ 2ອາຊາຣີຢາ ລູກຊາຍ ໂຮຊາຢາ ແລະ ໂຢຮານານ
ລູກຊາຍ ກາເຣອາ ແລະບັນດາຜູ້ຊາຍທີ່ຈອງຫອງໄດ້ເວົ້າກັບ ເຢເຣມີຢາ ວ່າ "ທ່ານເວົ້າຂີ້ຕົວະ
ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງ ເຮົາບໍ່ໄດ້ໃຊ້ທ່ານໃຫ້ມາເວົ້າວ່າ 'ຢ່າໄປ ເອຢິບ ເພື່ອຈະອາໄສຢູ່
ບ່ອນນັ້ນ' 3ແຕ່ ບາຣຸກ ລູກຊາຍ ເນຣີຢາ ໄດ້ຍົວະເຍົ້າທ່ານໃຫ້ຕໍ່ສູ້ກັບເຮົາ ເພື່ອຈະມອບເຮົາໄວ້ໃນ
ມືຂອງຄົນ ບາບີໂລນ ເພື່ອພວກເຂົາຈະໄດ້ຂ້າເຮົາ ຫລືກວາດເຮົາໄປເປັນຊະເລີຍໃນ ບາບີໂລນ"
4ໂຢຮານານ ລູກຊາຍ ກາເຣອາ ແລະບັນດາຫົວໜ້າຂອງກອງທະຫານ ແລະປະຊາຊົນທັງໝົດ
ບໍ່ເຊື່ອຟັງພຣະສຸລະສຽງຂອງ ພຣະຜູ້ເປັນເຈົ້າ ເລື່ອງທີ່ຈະອາໄສຢູ່ໃນແຜ່ນດິນ ຢູດາ 5ແຕ່ ໂຢຮາ-
ນານ ລູກຊາຍ ກາເຣອາ ແລະບັນດາຜູ້ຫົວໜ້າຂອງກອງທະຫານໄດ້ພາຄົນ ຢູດາ ທຸກຄົນທີ່ເຫລືອ
ຢູ່ໄປ ຄືຜູ້ທີ່ກັບມາຢູ່ໃນແຜ່ນດິນ ຢູດາ ຈາກບັນດາປະຊາຊາດທີ່ພວກເຂົາຖືກຂັບໄລ່ໃຫ້ໄປຢູ່ນັ້ນ
6ຄືພວກຜູ້ຊາຍຜູ້ຍິງ ເດັກນ້ອຍ ບັນດາລູກສາວ ແລະທຸກຄົນຊຶ່ງ ເນບູຊາຣາດານ ຜູ້ບັນຊາການ
ທະຫານຮັກສາພະອົງໄດ້ເຫລືອໄວ້ໃຫ້ແກ່ ເກດາລີຢາ ລູກຊາຍ ອາຮີການ ຜູ້ເປັນລູກຊາຍ ຊາ-
ຟານ ທັງ ເຢເຣມີຢາ ຜູ້ປະກາດພຣະທຳ ແລະ ບາຣຸກ ລູກຊາຍ ເນຣີຢາ 7ພວກເຂົາໄດ້ມາຍັງ
ແຜ່ນດິນ ເອຢິບ ເພາະບໍ່ເຊື່ອຟັງພຣະສຸລະສຽງຂອງ ພຣະຜູ້ເປັນເຈົ້າ ແລະກໍມາເຖິງນະຄອນ
ຕະປັນເຂດ

8ແລ້ວພຣະທຳຂອງ ພຣະຜູ້ເປັນເຈົ້າ ມາຍັງ ເຢເຣມີຢາ ໃນນະຄອນ ຕະປັນເຂດ ວ່າ 9"ຈົ່ງຖື
ກ້ອນຫີນໃຫຍ່ໆໄວ້ ຈົ່ງເຊື່ອງໄວ້ໃນດິນໜຽວໃນເຕົາເຜົາດິນຈີ່ ຊຶ່ງຢູ່ທີ່ທາງເຂົ້າໄປສູ່ພະລາຊະ-
ວັງຂອງ ຟາຣາໂອ ໃນນະຄອນ ຕະປັນເຂດ ທ່າມກາງສາຍຕາຂອງຄົນ ຢູດາ 10ແລະຈົ່ງກ່າວແກ່
ພວກເຂົາວ່າ ພຣະຜູ້ເປັນເຈົ້າ ຈອມໂຍທາ ພຣະເຈົ້າ ແຫ່ງ ອິສຣາເອນ ກ່າວດັ່ງນີ້ວ່າ ເບິ່ງແມ
ເຮົາຈະໃຊ້ແລະນຳ ເນບູກາດເນັດຊາ ກະສັດແຫ່ງ ບາບີໂລນ ຜູ້ຮັບໃຊ້ຂອງເຮົາ ແລະລາວຈະຕັ້ງ
ພະທີ່ນັ່ງຂອງຕົນເໜືອຫີນເຫລົ່ານີ້ ຊຶ່ງເຮົາໄດ້ເຊື່ອງໄວ້ ແລະລາວຈະກາງເຕັນຂອງຕົນເໜືອຫີນ
ເຫລົ່ານີ້ 11ເມື່ອທ່ານມາເຖິງ ທ່ານຈະໂຈມຕີແຜ່ນດິນ ເອຢິບ ມອບຜູ້ທີ່ກຳນົດໃຫ້ເຖິງຄວາມຕາຍ
ໄປຫາຄວາມຕາຍ ຜູ້ຖືກກຳນົດໃຫ້ເປັນຊະເລີຍແກ່ການເປັນຊະເລີຍ ແລະຜູ້ທີ່ຖືກກຳນົດໃຫ້ຖືກ
ດາບໃຫ້ແກ່ດາບ 12ເຮົາຈະກໍ່ໄຟໃນວິຫານຂອງພະ ເອຢິບ ແລະທ່ານຈະເຜົາເສຍ ແລະເກັບໄປ
ເປັນຊະເລີຍ ລາວຈະປົກຄຸມຕົວເອງດ້ວຍແຜ່ນດິນ ເອຢິບ ເໝືອນກັບຜູ້ລ້ຽງແກະປົກຄຸມຕົວເອງ
ດ້ວຍເສື້ອຄຸມ ແລະລາວຈະໄປຈາກບ່ອນນັ້ນດ້ວຍສັນຕິ 13ລາວຈະທັກເສົາສັກສິດແຫ່ງ ເມືອງ

ເບັດ-ເຊເມັດ ຊຶ່ງຢູ່ໃນແຜ່ນດິນ ເອຢິບ ແລະຈະເອົາໄຟເຜົາວິຫານຂອງພະແຫ່ງ ເອຢິບ ເສຍ"

# ບົດທີ 44

## ພຣະທຳຂອງພຣະເຈົ້າກ່ຽວກັບຊາວຢິວໃນເອຢິບ

[1]ພຣະທຳທີ່ມາຍັງ ເຢເຣມີຢາ ກ່ຽວກັບບັນດາຊາວ ຢິວ ທີ່ອາໄສຢູ່ໃນແຜ່ນດິນ ເອຢິບ ທີ່ ມິກໂດນ
ທີ່ ຕະປັນເຂດ ທີ່ ເມັມຟິດ ແລະໃນແຜ່ນດິນ ປັດໂຣດ ວ່າ [2]"ພຣະຜູ້ເປັນເຈົ້າ ຈອມໂຍທາ
ພຣະເຈົ້າ ແຫ່ງ ອິສຣາເອນ ກ່າວດັ່ງນີ້ວ່າ ເຈົ້າທັງຫລາຍໄດ້ເຫັນບັນດາເຫດຮ້າຍທີ່ເຮົານຳມາ
ເໜືອກຸງ ເຢຣູຊາເລັມ ແລະເໜືອຫົວເມືອງ ຢູດາ ທັງໝົດ ເບິ່ງແມ ທຸກມື້ນີ້ເມືອງເຫລົ່ານັ້ນກໍເປັນ
ບ່ອນຮົກຮ້າງ ບໍ່ມີຜູ້ໃດອາໄສຢູ່ໃນນັ້ນ [3]ເພາະຄວາມຊົ່ວຊຶ່ງພວກເຂົາໄດ້ເຮັດ ໄດ້ຍົວະເຍົ້າເຮົາ
ໃຫ້ມີຄວາມຮ້າຍ ດ້ວຍການທີ່ພວກເຂົາໄປເຜົາເຄື່ອງຫອມ ແລະບົວລະບັດພະອື່ນຊຶ່ງບໍ່ຮູ້ຈັກ ບໍ່
ວ່າເຂົາເອງ ຫລືເຈົ້າທັງຫລາຍ ຫລືບັນພະບູລຸດຂອງເຈົ້າ [4]ຢ່າງໃດກໍດີ ເຮົາໄດ້ໃຊ້ບັນດາຜູ້ຮັບ
ໃຊ້ຂອງເຮົາຄືຜູ້ປະກາດພຣະທຳມາຍັງເຈົ້າຢ່າງບໍ່ຂາດສາຍ ກ່າວວ່າ ' ຢ່າເຮັດສິ່ງອັນໜ້າກຽດ
ຊັງນີ້ ຊຶ່ງເຮົາກຽດຊັງ' [5]ແຕ່ພວກເຂົາບໍ່ຟັງ ຫລືຫງ່ຽງຫູຟັງ ເພື່ອຈະຖອຍຫລັງກັບຈາກຄວາມ
ຊົ່ວຮ້າຍຂອງຕົນ ແລະບໍ່ເຜົາເຄື່ອງຫອມແກ່ພະອື່ນ [6]ເພາະສະນັ້ນ ເຮົາຈຶ່ງໄດ້ຖອກຄວາມພິ-
ໂລດ ແລະຄວາມໂກດຮ້າຍຂອງເຮົາອອກ ໃຫ້ພຸ່ງຂຶ້ນໃນຫົວເມືອງ ຢູດາ ແລະໃນຖະໜົນຫົນ-
ທາງຂອງກຸງ ເຢຣູຊາເລັມ ແລະເມືອງເຫລົ່ານັ້ນກໍກາຍເປັນບ່ອນຖິ້ມຮ້າງ ແລະຮົກຮ້າງ ຈົນທຸກ
ມື້ນີ້

[7]ບັດນີ້ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຈອມໂຍທາ ພຣະເຈົ້າ ແຫ່ງ ອິສຣາເອນ ກ່າວດັ່ງນີ້ວ່າ
ເປັນຫຍັງເຈົ້າທັງຫລາຍຈຶ່ງເຮັດຄວາມຊົ່ວຮ້າຍຍິ່ງໃຫຍ່ນີ້ແກ່ຈິດໃຈເຈົ້າເອງ ແລະຕັດເອົາຜູ້ຊາຍ
ຜູ້ຍິງທັງເດັກ ແລະເດັກນ້ອຍທີ່ຍັງດູດນົມຈາກເຈົ້າ ຈາກທ່າມກາງ ຢູດາ ບໍ່ມີຄົນທີ່ເຫລືອຢູ່ໄວ້
ແກ່ເຈົ້າເລີຍ [8]ເປັນຫຍັງເຈົ້າທັງຫລາຍຈຶ່ງຍົວະເຍົ້າເຮົາໃຫ້ຮ້າຍດ້ວຍມືຂອງເຈົ້າ ດ້ວຍການເຜົາ
ເຄື່ອງຫອມໃຫ້ແກ່ພະອື່ນໃນແຜ່ນດິນ ເອຢິບ ທີ່ເຈົ້າມາຢູ່ນັ້ນ ເພື່ອເຈົ້າຈະຕ້ອງຖືກຕັດອອກ ແລະ
ເປັນທີ່ສາບແຊ່ງ ເປັນທີ່ນິນທາທ່າມກາງບັນດາປະຊາຊາດ ແຫ່ງ ແຜ່ນດິນໂລກ [9]ເຈົ້າໄດ້ລືມ
ຄວາມຊົ່ວຂອງບັນພະບູລຸດຂອງເຈົ້າ ຄວາມຊົ່ວຂອງບັນດາກະສັດແຫ່ງ ຢູດາ ບັນດາຄວາມຊົ່ວ
ຂອງນາງສະໜົມ ແລະມະເຫສີຂອງພວກເຂົາ ຄວາມຊົ່ວຂອງເຈົ້າເອງ ແລະຄວາມຊົ່ວຂອງ
ເມຍຂອງເຈົ້າ ຊຶ່ງພວກນາງໄດ້ເຮັດໃນແຜ່ນດິນ ຢູດາ ແລະໃນຖະໜົນຫົນທາງຂອງກຸງ ເຢຣູຊາ-
ເລັມ ແລ້ວບໍ [10]ແມ່ນແຕ່ມື້ນີ້ແລ້ວ ພວກເຂົາກໍຍັງບໍ່ໄດ້ຖ່ອມຕົວລົງ ຫລືຢຳເກງ ຫລືດຳເນີນຕາມ
ພຣະບັນຍັດ ຕາມກົດເກນຂອງເຮົາ ຊຶ່ງເຮົາໃຫ້ມີໄວ້ຕໍ່ໜ້າເຈົ້າທັງຫລາຍ ແລະຕໍ່ໜ້າບັນພະບູ-
ລຸດຂອງເຈົ້າ

[11]ເພາະສະນັ້ນ ພຣະຜູ້ເປັນເຈົ້າ ຈອມໂຍທາ ພຣະເຈົ້າ ແຫ່ງ ອິສຣາເອນ ຈຶ່ງກ່າວດັ່ງນີ້ວ່າ
ເບິ່ງແມ ເຮົາຈະມຸ່ງໜ້າຂອງເຮົາຕໍ່ສູ້ເຈົ້າໃຫ້ເກີດການຮ້າຍ ແລະຈະຕັດ ຢູດາ ອອກເສຍໃຫ້ໝົດ
[12]ເຮົາຈະເອົາປະຊາຊົນ ຢູດາ ທີ່ເຫລືອຢູ່ ຜູ້ຊຶ່ງມຸ່ງໜ້າມາທີ່ແຜ່ນດິນ ເອຢິບ ເພື່ອຈະອາໄສຢູ່ນັ້ນ
ພວກເຂົາທັງຫລາຍຈະຖືກເຜົາຜານໝົດ ຈະລົ້ມລົງໃນແຜ່ນດິນ ເອຢິບ ຈະຖືກຜານດ້ວຍດາບ

ແລະດ້ວຍການອຶດຫິວອາຫານ ຕັ້ງແຕ່ຄົນເລັກນ້ອຍທີ່ສຸດຈົນເຖິງຄົນໃຫຍ່ໂຕທີ່ສຸດ ພວກເຂົາ
ຈະຕາຍດ້ວຍດາບ ແລະດ້ວຍການອຶດຫິວອາຫານ ພວກເຂົາຈະກາຍເປັນຄຳສາບ ເປັນທີ່ໜ້າ
ປະຫລາດໃຈ ເປັນຄຳສາບແຊ່ງ ແລະເປັນທີ່ນິນທາ 13ເຮົາຈະຕ້ອງລົງໂທດຄົນເຫລົ່ານັ້ນ ຜູ້
ອາໄສຢູ່ໃນແຜ່ນດິນເອຢິບ ດັ່ງທີ່ເຮົາລົງໂທດກຸງເຢຣູຊາເລັມດ້ວຍດາບ ດ້ວຍການອຶດຫິວອາ-
ຫານ ແລະດ້ວຍພະຍາດລະບາດ 14ຈົນຄົນຢູດາທີ່ເຫລືອຢູ່ຜູ້ຊຶ່ງມາອາໄສໃນແຜ່ນດິນເອຢິບ
ນັ້ນຈະບໍ່ລອດພົ້ນ ຫລືເຫລືອກັບໄປຍັງແຜ່ນດິນຢູດາ ບ່ອນທີ່ເຂົາປາດຖະໜາຈະກັບໄປອາໄສ
ຢູ່ ເພາະວ່າພວກເຂົາຈະບໍ່ໄດ້ກັບໄປ ນອກຈາກຜູ້ໜີພົ້ນບາງຄົນ”

15ແລ້ວບັນດາຜູ້ຊາຍ ຜູ້ຮູ້ວ່າເມຍຂອງຕົນໄດ້ຖວາຍເຄື່ອງຫອມແກ່ພະອື່ນ ແລະບັນດາຜູ້ຍິງ
ທີ່ຢືນຢູ່ໃກ້ທີ່ຊຸມນຸມໃຫຍ່ ຄືບັນດາປະຊາຊົນຜູ້ອາໄສໃນປັດໂຣດ ໃນແຜ່ນດິນເອຢິບ ໄດ້ຕອບ
ເຢເຣມີຢາວ່າ 16“ສຳລັບຖ້ອຍຄຳຊຶ່ງທ່ານໄດ້ບອກແກ່ເຮົາໃນພຣະນາມຂອງພຣະຜູ້ເປັນເຈົ້ານັ້ນ
ເຮົາຈະບໍ່ຟັງທ່ານ 17ແຕ່ເຮົາຈະເຮັດທຸກສິ່ງທີ່ເຮົາໄດ້ເວົ້າໄວ້ ຄືເຜົາເຄື່ອງຫອມຖວາຍເຈົ້າແມ່
ແຫ່ງຟ້າສະຫວັນ ແລະຖອກເຄື່ອງດື່ມຖວາຍແກ່ພະນາງເຈົ້າດັ່ງທີ່ເຮົາໄດ້ເຮັດ ທັງພວກເຮົາ
ແລະບັນພະບູລຸດຂອງເຮົາ ບັນດາກະສັດ ແລະເຈົ້ານາຍຂອງເຮົາ ໃນຫົວເມືອງຢູດາ ແລະໃນ
ຖະໜົນຫົນທາງກຸງເຢຣູຊາເລັມ ເຮັດເຊັ່ນນັ້ນແລ້ວເຮົາຈຶ່ງມີອາຫານບໍລິບູນຢູ່ເຢັນເປັນສຸກ ແລະ
ບໍ່ເຫັນເຫດຮ້າຍຢ່າງໃດ 18ຕັ້ງແຕ່ເຮົາງົດການເຜົາເຄື່ອງຫອມແຫ່ງເຈົ້າແມ່ແຫ່ງຟ້າສະຫວັນ
ແລະຖອກເຄື່ອງດື່ມຖວາຍແກ່ພະນາງເຈົ້າ ເຮົາກໍຂັດສົນທຸກຢ່າງ ທັງຖືກຜານດ້ວຍດາບ ແລະ
ດ້ວຍການອຶດຫິວອາຫານ 19ເມື່ອເຮົາເຜົາເຄື່ອງຫອມຖວາຍເຈົ້າແມ່ແຫ່ງຟ້າສະຫວັນ ແລະຖອກ
ເຄື່ອງດື່ມຖວາຍແກ່ພະນາງເຈົ້າ ທີ່ເຮົາໄດ້ເຮັດເຂົ້າໜົມຖວາຍເພື່ອນະມັດສະການພະນາງເຈົ້າ
ແລະທີ່ໄດ້ຖອກເຄື່ອງດື່ມຖວາຍແກ່ພະນາງເຈົ້ານັ້ນ ເຮົາເຮັດນອກເໜືອຄວາມເຫັນຊອບຂອງ
ຜົວຂອງເຮົາບໍ”

20ແລ້ວເຢເຣມີຢາໄດ້ຕອບບັນດາປະຊາຊົນ ທັງພວກຜູ້ຊາຍ ແລະຜູ້ຍິງ ຄືປະຊາຊົນທັງປວງ
ຜູ້ໃຫ້ຄຳຕອບແກ່ຕົນວ່າ 21“ສຳລັບເຄື່ອງຫອມທີ່ທ່ານໄດ້ເຜົາຖວາຍໃນຫົວເມືອງຢູດາ ແລະໃນ
ຖະໜົນຫົນທາງກຸງເຢຣູຊາເລັມ ທັງຕົວທ່ານ ບັນພະບູລຸດຂອງທ່ານ ບັນດາກະສັດ ແລະເຈົ້າ
ນາຍຂອງທ່ານ ແລະປະຊາຊົນແຫ່ງແຜ່ນດິນ ພຣະຜູ້ເປັນເຈົ້າບໍ່ໄດ້ຊົງຈົດຈຳໄວ້ບໍ ພຣະອົງບໍ່
ໄດ້ຊົງນຶກເຖິງບໍ 22ພຣະຜູ້ເປັນເຈົ້າຈະຊົງທົນຕໍ່ການກະທຳອັນຊົ່ວຮ້າຍຂອງທ່ານ ແລະການອັນ
ໜ້າກຽດຊັງຊຶ່ງທ່ານໄດ້ເຮັດນັ້ນ ຕໍ່ໄປອີກບໍ່ໄຫວແລ້ວ ເພາະສະນັ້ນ ແຜ່ນດິນຂອງທ່ານຈຶ່ງໄດ້
ກາຍເປັນທີ່ຮົກຮ້າງ ແລະທີ່ໜ້າປະຫລາດໃຈ ແລະເປັນທີ່ສາບແຊ່ງ ປາດສະຈາກຄົນອາໄສດັ່ງ
ທຸກມື້ນີ້ 23ເພາະວ່າທ່ານໄດ້ເຜົາເຄື່ອງຫອມ ແລະເພາະວ່າທ່ານໄດ້ເຮັດບາບຕໍ່ພຣະຜູ້ເປັນເຈົ້າ
ແລະບໍ່ເຊື່ອຟັງພຣະສຸລະສຽງຂອງພຣະຜູ້ເປັນເຈົ້າ ຫລືດຳເນີນຕາມພຣະບັນຍັດຂອງພຣະອົງ
ຕາມກົດເກນຂອງພຣະອົງ ແລະຕາມພຣະໂອວາດຂອງພຣະອົງ ຄວາມຮ້າຍນີ້ຈຶ່ງໄດ້ຕົກແກ່
ທ່ານ ດັ່ງທຸກມື້ນີ້”

24ເຢເຣມີຢາໄດ້ກ່າວແກ່ປະຊາຊົນທັງໝົດ ແລະແກ່ພວກຜູ້ຍິງທັງໝົດວ່າ “ບັນດາທ່ານທັງ-
ຫລາຍແຫ່ງຢູດາ ຜູ້ຢູ່ໃນແຜ່ນດິນເອຢິບ ຈົ່ງຟັງພຣະທຳຂອງພຣະຜູ້ເປັນເຈົ້າ 25ພຣະຜູ້ເປັນ-

ເຈົ້າຈອມໂຍທາ ພຣະເຈົ້າແຫ່ງອິສຣາເອນ ກ່າວດັ່ງນີ້ວ່າ ຕົວເຈົ້າ ແລະເມຍຂອງເຈົ້າໄດ້ຢືນ-
ຢັນດ້ວຍປາກຂອງເຈົ້າທັງຫລາຍເອງ ແລະໄດ້ເຮັດດ້ວຍມືຂອງເຈົ້າໃຫ້ສຳເລັດກ່າວວ່າ 'ເຮົາຈະ
ເຮັດຕາມການປະຕິຍານຂອງເຮົາ ຊຶ່ງເຮົາໄດ້ປະຕິຍານໄວ້ແນ່ນອນ ຄືເຜົາເຄື່ອງຫອມຖວາຍ
ເຈົ້າແມ່ແຫ່ງຟ້າສະຫວັນ ແລະຖອກເຄື່ອງດື່ມຖວາຍແກ່ພະນາງເຈົ້າ' ແລ້ວກໍດຳລົງການປະຕິ-
ຍານຂອງເຈົ້າ ແລະເຮັດຕາມການປະຕິຍານຂອງເຈົ້າແນ່ນອນ [26]ເພາະສະນັ້ນ ບັນດາເຈົ້າທັງ-
ຫລາຍແຫ່ງຢູດາຜູ້ຢູ່ໃນແຜ່ນດິນ ເອຢິບ ຈົ່ງຟັງພຣະທຳຂອງພຣະຜູ້ເປັນເຈົ້າ ພຣະຜູ້ເປັນເຈົ້າ
ກ່າວວ່າ ເບິ່ງແມ ເຮົາໄດ້ປະຕິຍານໂດຍນາມອັນຍິ່ງໃຫຍ່ຂອງເຮົາວ່າ ປາກຂອງຄົນໃດແຫ່ງຢູ-
ດາ ຕະຫລອດທົ່ວແຜ່ນດິນ ເອຢິບ ຈະບໍ່ອອກນາມຂອງເຮົາໂດຍກ່າວວ່າ 'ອົງພຣະຜູ້ເປັນເຈົ້າ
ພຣະເຈົ້າອົງຊົງພຣະຊົນຢູ່ສັນໃດ' [27]ເບິ່ງແມ ເຮົາຄອຍຖ້າເບິ່ງຢູ່ເພື່ອໃຫ້ເກີດຄວາມຮ້າຍ ບໍ່
ແມ່ນຄວາມດີ ຄົນຢູດາທັງໝົດຜູ້ຢູ່ໃນແຜ່ນດິນ ເອຢິບ ຈະຖືກຜານເສຍດ້ວຍດາບ ແລະດ້ວຍ
ການອຶດຫິວອາຫານ ຈົນກວ່າຈະເຖິງທີ່ສຸດຂອງພວກເຂົາ [28]ແລະບັນດາຜູ້ທີ່ໜີພົ້ນດາບຈະກັບ
ຈາກແຜ່ນດິນ ເອຢິບ ໄປຍັງແຜ່ນດິນຢູດາ ມີຈຳນວນໜ້ອຍ ແລະຄົນຢູດາທີ່ເຫລືອຢູ່ທັງໝົດ
ຊຶ່ງມາອາໄສຢູ່ໃນແຜ່ນດິນ ເອຢິບ ຈະຮູ້ວ່າຄຳຂອງໃຜຈະຍັ້ງຢືນ ເປັນຄຳຂອງເຮົາ ຫລືຄຳຂອງ
ພວກເຂົາ [29]ພຣະຜູ້ເປັນເຈົ້າກ່າວວ່າ ນີ້ຈະເປັນໝາຍສຳຄັນແກ່ເຈົ້າ ຄືເຮົາຈະລົງໂທດເຈົ້າໃນທີ່
ນີ້ ເພື່ອເຈົ້າຈະໄດ້ຮູ້ວ່າ ຄຳຂອງເຮົາຈະຕັ້ງໝັ້ນຄົງຢູ່ຕໍ່ເຈົ້າ ໃຫ້ເກີດຄວາມຮ້າຍຢ່າງແນ່ນອນ
[30]ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເບິ່ງແມ ເຮົາຈະມອບຟາຣາໂອໂຮຟະຣາກະສັດແຫ່ງ ເອຢິບ ໄວ້
ໃນມືສັດຕູຂອງລາວ ແລະໃນມືຂອງຄົນເຫລົ່ານັ້ນທີ່ສະແຫວງຫາຊີວິດຂອງລາວ ດັ່ງທີ່ເຮົາໄດ້
ມອບ ເຊເດກີຢາ ກະສັດແຫ່ງຢູດາ ໄວ້ໃນມືຂອງ ເນບູກາດເນັດຊາ ກະສັດແຫ່ງ ບາບີໂລນ ຜູ້ຊຶ່ງ
ເປັນສັດຕູຂອງຕົນ ແລະຊອກຫາເອົາຊີວິດຂອງລາວ"

# ບົດທີ 45

## ພຣະເຈົ້າຊົງເລົ້າໂລມບາຣຸກ

[1]ຖ້ອຍຄຳຊຶ່ງ ເຢເຣມີຢາ ຜູ້ປະກາດພຣະທຳບອກແກ່ ບາຣຸກ ລູກຊາຍ ເນຣີຢາ ໃຫ້ລາວຂຽນ
ຖ້ອຍຄຳເຫລົ່ານີ້ລົງໃນໜັງສືຕາມຄຳບອກຂອງ ເຢເຣມີຢາ ໃນປີທີສີ່ແຫ່ງລາຊະການ ເຢໂຮຢາ-
ກິມ ລາຊະບຸດຂອງ ໂຢສີຢາ ກະສັດແຫ່ງຢູດາວ່າ [2]"ບາຣຸກ ເອີຍ ພຣະຜູ້ເປັນເຈົ້າພຣະເຈົ້າ
ແຫ່ງອິສຣາເອນ ກ່າວແກ່ທ່ານດັ່ງນີ້ວ່າ [3]ເຈົ້າວ່າ 'ບັດນີ້ ວິບັດແກ່ຂ້ອຍ ເພາະພຣະຜູ້ເປັນເຈົ້າ
ຊົງເພີ່ມຄວາມທຸກເຂົ້າໃສ່ຄວາມເສົ້າໂສກຂອງຂ້ອຍ ຂ້ອຍກໍໜັກໜ່ວງດ້ວຍການຮ້ອງຄາງຂອງ
ຕົນເອງ ຂ້ອຍບໍ່ປະສົບຄວາມສະຫງົບເລີຍ'
[4]ເຈົ້າຈົ່ງບອກລາວວ່າ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເບິ່ງແມ ສິ່ງໃດທີ່ເຮົາກໍ່ສ້າງຂຶ້ນ ເຮົາ
ຈະທຳລາຍລົງ ແລະສິ່ງໃດທີ່ເຮົາໄດ້ປູກ ເຮົາຈະຖອນຂຶ້ນຄືແຜ່ນດິນນີ້ທັງໝົດ [5]ແລະເຈົ້າຈະຫາ
ສິ່ງໃຫຍ່ໂຕເພື່ອຕົວເອງບໍ ຢ່າຫາມັນເລີຍ ເພາະພຣະຜູ້ເປັນເຈົ້າກ່າວວ່າ ເຮົາຈະນຳເຫດຮ້າຍ
ມາເໜືອມະນຸດທັງໝົດ ແຕ່ເຮົາຈະໃຫ້ຊີວິດຂອງເຈົ້າແກ່ເຈົ້າເປັນບຳເໜັດແຫ່ງການສົງຄາມໃນ
ທຸກສະຖານທີ່ທີ່ເຈົ້າຈະໄປ"

# ບົດທີ 46

## ຄຳຜູ້ປະກາດພຣະທຳເລື່ອງເອຢິບ

1ພຣະທຳຂອງ ພຣະຜູ້ເປັນເຈົ້າ ຊຶ່ງມາຍັງ ເຢເຣມີຢາ ຜູ້ປະກາດພຣະທຳກ່ຽວກັບ ເລື່ອງບັນດາ
ປະຊາຊາດ

2ເລື່ອງ ເອຢິບ ກ່ຽວດ້ວຍກອງທັບຂອງ ຟາຣາໂອ ເນໂກ ກະສັດແຫ່ງ ເອຢິບ ຊຶ່ງຢູ່ທີ່ແຄມ
ແມ່ນ້ຳ ເອຟຣາດ ທີ່ເມືອງ ກາເກມິດ ແລະຊຶ່ງ ເນບູກາດເນັດຊາ ກະສັດແຫ່ງ ບາບີໂລນ ໄດ້
ໂຈມຕີແຕກໃນປີທີ່ສີ່ແຫ່ງລາຊະການ ເຢໂຮຢາກີມ ລາຊະບຸດຂອງ ໂຢສີຢາ ກະສັດແຫ່ງ ຢູດາ
ວ່າ

3“ຈົ່ງຕຽມດັ້ງ ໂລ່ ແລະເຂົ້າສູ່ສົງຄາມ 4ຈົ່ງຜູກອານມ້າ ພົນມ້າເອີຍ ຈົ່ງຂຶ້ນຂີ່ມ້າເຖີດ ຈົ່ງ
ສວມໝວກເຫລັກຂອງເຈົ້າເຂົ້າປະຈຳທີ່ ຈົ່ງຂັດໜ້າເອີກຂອງເຈົ້າ ຈົ່ງສວມເສື້ອເກາະຂອງເຈົ້າ
ໄວ້ 5ເປັນຫຍັງເຮົາເຫັນພວກເຂົາໂກດຮ້າຍ ແລະຫັນຫລັງກັບ ນັກຮົບຂອງພວກເຂົາຖືກຕີລົ້ມ
ລົງ ແລະໄດ້ປົບໜີໄປ ພວກເຂົາບໍ່ຫລຽວກັບຫລັງ ຄວາມຢ້ານກົວຢູ່ທຸກດ້ານ ພຣະຜູ້ເປັນເຈົ້າ
ກ່າວດັ່ງນີ້ແຫລະ 6ຄົນໄວກໍໜີໄປບໍ່ໄດ້ ນັກຮົບກໍໜີໄປບໍ່ລອດພົ້ນ ພວກເຂົາຈະສະດຸດ ແລະລົ້ມ
ລົງໃນແດນເໜືອຂ້າງແມ່ນ້ຳ ເອຟຣາດ 7ແມ່ນໃຜນໍ ໂຜ່ຂຶ້ນມາເໝືອນດັ່ງນ້ຳຖ້ວມ ເໝືອນແມ່ນ້ຳ
ຊຶ່ງນ້ຳຂອງມັນຊັດຂຶ້ນ 8ເອຢິບ ໂຜ່ຂຶ້ນມາເໝືອນນ້ຳຖ້ວມ ເໝືອນແມ່ນ້ຳຂອງມັນຊັດຂຶ້ນ ລາວ
ກ່າວວ່າ ‘ຂ້ອຍຈະຂຶ້ນ ຂ້ອຍຈະປົກຄອງໂລກ ຂ້ອຍຈະທຳລາຍຫົວເມືອງ ແລະຊາວເມືອງນັ້ນ
ເສຍ’ 9ມ້າທັງຫລາຍເອີຍ ບຸກໜ້າໄປເຖີດ ລົດຮົບທັງຫລາຍເອີຍ ບຸກເຂົ້າເຖີດ ຈົ່ງໃຫ້ນັກຮົບ
ອອກໄປ ຄືຄົນກູເຊ ແລະຄົນພູດ ຜູ້ຖືໂລ່ ຄົນລູດີ ນັກຖື ແລະໂກ່ງທະນູ 10ມື້ນີ້ເປັນວັນແຫ່ງ
ອົງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຈອມໂຍທາ ເປັນວັນແຫ່ງການແກ້ແຄ້ນທີ່ຈະແກ້ແຄ້ນສັດຕູຂອງ
ພຣະອົງ ດາບຈະກິນຈົນອີ່ມ ແລະດື່ມເລືອດຂອງພວກເຂົາຈົນເຕັມຄົນ ເພາະອົງ ພຣະຜູ້ເປັນ-
ເຈົ້າ ພຣະເຈົ້າ ຈອມໂຍທາເຮັດການບູຊາໃນແດນເໜືອຂ້າງແມ່ນ້ຳ ເອຟຣາດ 11ທິດາພົມມະຈາລີ
ແຫ່ງ ເອຢິບ ເອີຍ ຈົ່ງຂຶ້ນໄປທີ່ ກີເລອາດ ແລະໄປເອົາຫວ້ານຢາ ເຈົ້າໄດ້ໃຊ້ຢາເປັນຈຳນວນ
ຫລາຍແລ້ວ ແລະກໍບໍ່ມີຜົນ ສຳລັບເຈົ້ານັ້ນຮັກສາບໍ່ຫາຍ 12ບັນດາປະຊາຊາດໄດ້ຍິນເຖິງຄວາມ
ອັບອາຍຂອງເຈົ້າ ແລະແຜ່ນດິນກໍເຕັມດ້ວຍສຽງຮ້ອງຂອງເຈົ້າ ເພາະວ່ານັກຮົບສະດຸດລົ້ມ
ພວກເຂົາໄດ້ລົ້ມລົງນຳກັນ”

13ພຣະທຳຊຶ່ງ ພຣະຜູ້ເປັນເຈົ້າກ່າວກັບ ເຢເຣມີຢາຜູ້ປະກາດພຣະທຳ ເລື່ອງການມາຂອງ ເນ-
ບູກາດເນັດຊາກະສັດແຫ່ງ ບາບີໂລນ ເພື່ອຈະໂຈມຕີແຜ່ນດິນ ເອຢິບ ວ່າ

14“ຈົ່ງປະກາດໃນ ເອຢິບ ແລະປ່າວປະກາດໃນ ມິກໂດນ ຈົ່ງປະກາດໃນ ເມັມຟິດ ແລະຕະ-
ປັນເຂດ ຈົ່ງກ່າວວ່າ ຢືນໃຫ້ພ້ອມໄວ້ ແລະຕຽມຕົວພ້ອມ ເພາະວ່າດາບຈະກິນຢູ່ຮອບຕົວເຈົ້າ
15ເປັນຫຍັງຊາຍທີ່ກ້າຫານຂອງເຈົ້າຈຶ່ງໜີໄປເສຍ ພວກເຂົາບໍ່ຢືນໝັ້ນຢູ່ ເພາະວ່າ ພຣະຜູ້ເປັນ-
ເຈົ້າ ໄດ້ຊຸກຍູ້ໃຫ້ລົ້ມລົງ 16ພຣະອົງຊົງເຮັດໃຫ້ຄົນເປັນຈຳນວນຫລາຍສະດຸດ ພວກເຂົາລົ້ມລົງ
ແລະເວົ້າວ່າ ‘ລຸກຂຶ້ນເຖີດ ໃຫ້ເຮົາກັບໄປຍັງຊົນຊາດຂອງເຮົາ ໄປຍັງແຜ່ນດິນທີ່ເຮົາຖືກຳເນີດ
ເພາະເລື່ອງດາບຂອງຜູ້ບີບບັງຄັບ’ 17ພວກເຂົາໄດ້ເອີ້ນຊື່ຟາຣາໂອກະສັດແຫ່ງ ເອຢິບວ່າ ‘ຜູ້ອຶກ

ກະທຶກ ຜູ້ປ່ອຍໃຫ້ໂອກາດຜ່ານໄປ' [18]ເພາະພຣະມະຫາກະສັດ ຜູ້ຊຶ່ງພຣະນາມຂອງພຣະອົງຄື
ພຣະຜູ້ເປັນເຈົ້າຈອມໂຍທາ ກ່າວວ່າ ເຮົາມີຊີວິດຢູ່ສັນໃດ ພູເຂົາຕາໂບຢູ່ທ່າມກາງພູເຂົາທັງ-
ຫລາຍ ແລະພູເຂົາກາເມນຢູ່ຂ້າງທະເລສັນໃດ ກໍຈະມີຜູ້ໜຶ່ງມາສັນນັ້ນ [19]ໂອ ທິດາຜູ້ອາໄສໃນ
ເອຢິບເອີຍ ຈົ່ງຕຽມເຄື່ອງຂອງສຳລັບຕົວເຈົ້າເພື່ອການຖືກກວາດໄປເປັນຊະເລີຍ ເພາະວ່າ
ເມືອງເມັມຟິດຈະກາຍເປັນທີ່ຖິ້ມຮ້າງ ເປັນທີ່ເພພັງ ປາດສະຈາກຜູ້ອາໄສ [20]ເອຢິບເປັນເໝືອນ
ງົວສາວໂຕງາມ ແຕ່ການທຳລາຍຈາກທິດເໜືອມາຈັບນາງ [21]ທະຫານຮັບຈ້າງທີ່ຢູ່ທ່າມກາງ
ນາງ ກໍເໝືອນລູກງົວທີ່ໄດ້ຜູກໄວ້ ພວກເຂົາຖອຍຫລັງກັບ ແລະໜີໄປນຳກັນ ພວກເຂົາບໍ່ຕໍ່ຕ້ານ
ເພາະວັນແຫ່ງໄພພິບັດໄດ້ມາເໜືອພວກເຂົາ ເປັນເວລາແຫ່ງການລົງໂທດພວກເຂົາ [22]ນາງເຮັດ
ສຽງເໝືອນງູທີ່ກຳລັງເລືອອອກໄປ ເພາະສັດຕູຂອງນາງຈະຍ່າງຂະບວນເຂົ້າມາດ້ວຍກຳລັງທັບ
ແລະມາສູ້ກັບນາງດ້ວຍຂວານ ເໝືອນຢ່າງຄົນເຫລົ່ານັ້ນທີ່ປ້ຳຕົ້ນໄມ້ລົງ [23]ພຣະຜູ້ເປັນເຈົ້າກ່າວ
ວ່າ ພວກເຂົາຈະຕັດປ່າຂອງນາງລົງ ເຖິງວ່າປານນັ້ນ ໃຜຈະເຂົ້າໄປຄົ້ນຫາບໍ່ໄດ້ ເພາະວ່າ
ພວກເຂົາມີຈຳນວນຫລາຍກວ່າຕັກແຕນ ນັບບໍ່ຖ້ວນ [24]ທິດາຂອງເອຢິບຈະຖືກເຮັດໃຫ້ອັບອາຍ
ນາງຈະຖືກມອບໄວ້ໃນມືຂອງຊົນຊາດໜຶ່ງຈາກທິດເໜືອ”
[25]ພຣະຜູ້ເປັນເຈົ້າຈອມໂຍທາ ພຣະເຈົ້າແຫ່ງອິສຣາເອນ ກ່າວວ່າ “ເບິ່ງແມ ເຮົາຈະນຳ
ການລົງໂທດມາເໜືອເຫລົ່າຝູງຊົນຂອງອາໂມນ ແລະຟາຣາໂອ ເອຢິບ ບັນດາພະ ແລະກະ-
ສັດທັງປວງຂອງເມືອງນັ້ນ ລົງເໜືອຟາຣາໂອ ແລະຄົນທັງຫລາຍທີ່ວາງໃຈໃນລາວ [26]ເຮົາຈະ
ມອບພວກເຂົາໄວ້ໃນມືຂອງບັນດາຜູ້ທີ່ສະແຫວງຫາຊີວິດຂອງພວກເຂົາ ໃນມືຂອງເນບູກາດ-
ເນັດຊາກະສັດແຫ່ງບາບີໂລນ ແລະໃນມືຂ້າລາຊະການຂອງເພິ່ນ ພຣະຜູ້ເປັນເຈົ້າກ່າວວ່າ
ພາຍຫລັງເອຢິບຈຶ່ງຈະມີຄົນອາໄສຢູ່ເໝືອນສະໄໝກ່ອນ
[27]ໂອ ຢາໂຄບ ຜູ້ຮັບໃຊ້ຂອງເຮົາເອີຍ ຢ່າຢ້ານເລີຍ ໂອ ອິສຣາເອນເອີຍ ຢ່າໂກດຮ້າຍ
ເລີຍ ເພາະເບິ່ງແມ ເຮົາຈະຊ່ວຍເຈົ້າໃຫ້ລອດພົ້ນໄດ້ຈາກທີ່ໄກ ແລະຊ່ວຍເຊື້ອສາຍຂອງເຈົ້າ
ຈາກແຜ່ນດິນທີ່ພວກເຂົາຕົກເປັນຊະເລີຍ ຢາໂຄບຈະກັບມາ ແລະມີຄວາມສະຫງົບຄວາມສະ-
ບາຍ ແລະບໍ່ມີຜູ້ໃດເຮັດໃຫ້ພວກເຂົາຢ້ານກົວ [28]ພຣະຜູ້ເປັນເຈົ້າກ່າວວ່າ ໂອ ຢາໂຄບຜູ້ຮັບໃຊ້
ຂອງເຮົາເອີຍ ຢ່າຢ້ານເລີຍ ເພາະເຮົາຢູ່ກັບເຈົ້າ ເຮົາຈະເຮັດໃຫ້ບັນດາປະຊາຊາດທັງໝົດມາ
ເຖິງທີ່ອະວະສານ ຄືປະຊາຊາດທີ່ເຮົາໄດ້ບັນດານເຈົ້າໃຫ້ໄປຢູ່ນັ້ນ ແຕ່ສ່ວນເຈົ້າເຮົາຈະບໍ່ເຮັດ
ໃຫ້ເຖິງອະວະສານບາດດຽວ ເຮົາຈະຕີສອນເຈົ້າຕາມຂະໜາດ ເຮົາຈະບໍ່ປ່ອຍໃຫ້ເຈົ້າຖືກລົງ-
ໂທດເປັນອັນຂາດ”

# ບົດທີ 47

## ຄຳຜູ້ປະກາດພຣະທຳເລື່ອງຊາວຟີລິດສະຕິນ ແລະເມືອງຕີເຣ

[1]ພຣະທຳຂອງພຣະຜູ້ເປັນເຈົ້າຊຶ່ງມາຍັງເຢເຣມີຢາຜູ້ປະກາດພຣະທຳກ່ຽວກັບເລື່ອງຟີລິດ-
ສະຕິນ ກ່ອນທີ່ຟາຣາໂອຈະໂຈມຕີເມືອງຄາຊາ
[2]“ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເບິ່ງແມ ນ້ຳທັງຫລາຍກຳລັງຂຶ້ນມາຈາກທິດເໜືອ ແລະຈະ

ກາຍເປັນກະແສນໍ້າຖ້ວມ ມັນຈະຖ້ວມແຜ່ນດິນ ແລະສາລະພັດຊຶ່ງຢູ່ໃນນັ້ນ ທັງເມືອງ ແລະຜູ້ທີ່
ອາໄສຢູ່ໃນເມືອງ ຄົນຈະຮ້ອງໄຫ້ຮໍ່າໄຮ ແລະຊາວແຜ່ນດິນທຸກຄົນຈະຮ້ອງຄາງ 3ເມື່ອໄດ້ຍິນ
ສຽງກີບມ້າໂຕແຂງແຮງຂອງລາວໂດດແລ່ນ ແລະສຽງລົດຮົບຂອງລາວແລ່ນເຂົ້າມາ ແລະສຽງ
ລໍ້ລົດດັ່ງກຶກກ້ອງ ພວກພໍ່ກໍຈະບໍ່ໄດ້ຖອຍຫລັງກັບມາເບິ່ງລູກທັງຫລາຍຂອງຕົນ ເພາະມືຂອງ
ເຂົາອ່ອນເພຍເຕັມທີແລ້ວ 4ເພາະມື້ທີ່ຈະມາເຖິງ ຊຶ່ງຈະທໍາລາຍຟີລິດສະຕິນທັງໝົດ ຈະຕັດ
ຈາກເມືອງຕີເຣ ແລະເມືອງຊີໂດນ ຜູ້ອຸບປະຖໍາທຸກຄົນທີ່ເຫລືອຢູ່ ເພາະພຣະຜູ້ເປັນເຈົ້າຈະຊົງ
ທໍາລາຍຄົນຟີລິດສະຕິນ ຄືຊາວແຄມທະເລແຖບຄະຟະໂຊທີ່ເຫລືອຢູ່ນັ້ນ 5ເມືອງຄາຊາກໍລາບ
ຄາບ ແລະເມືອງອາຊະກາໂລນຖືກຕັດອອກ ພ້ອມດ້ວຍຄົນທີ່ເຫລືອຢູ່ໃນພູເຂົາຂອງພວກເຂົາ
ເຈົ້າຈະປາດເນື້ອເຖືອໜັງຂອງເຈົ້າອີກດົນເທົ່າໃດ 6ດາບແຫ່ງພຣະຜູ້ເປັນເຈົ້າ ເຈົ້າຂ້າ ອີກດົນ
ປານໃດຈຶ່ງຈະສະຫງົບ ຈົ່ງສອດເຂົ້າໄວ້ໃນຝັກສາ ຈົ່ງຢຸດພັກ ແລະຢູ່ຢ່າງສະຫງົບສາ 7ເມື່ອ
ພຣະຜູ້ເປັນເຈົ້າຊົງກ່າວ ມັນຈະສະຫງົບໄດ້ຢ່າງໃດບໍ ພຣະອົງຊົງບັນຊາ ແລະແຕ່ງຕັ້ງໃຫ້ດາບ
ນັ້ນຕໍ່ສູ້ອາຊະກາໂລນ ແລະຕໍ່ສູ້ແຄມທະເລ”

# ບົດທີ 48

## ໂມອາບຈະຖືກທໍາລາຍ

1ກ່ຽວກັບເລື່ອງໂມອາບ ພຣະຜູ້ເປັນເຈົ້າຈອມໂຍທາ ພຣະເຈົ້າແຫ່ງອິສຣາເອນ ກ່າວດັ່ງນີ້
ວ່າ “ວິບັດແກ່ເນໂບ ເພາະເປັນບ່ອນຖືກຖິ້ມຮ້າງ ກີຣິອາດທາຢີມໄດ້ອັບອາຍ ມັນຖືກຍຶດແລ້ວ
ມິດກາບກໍໄດ້ອັບອາຍ ແລະຢ້ານກົວ 2ບໍ່ມີການສັນເສີນໂມອາບອີກແລ້ວ ໃນເມືອງເຮັດຊະ-
ໂບນນັ້ນເຂົາໄດ້ວາງແຜນປອງຮ້າຍ ເຂົ້າຕໍ່ສູ້ກັບໂມອາບວ່າ ‘ມາແມ ໃຫ້ເຮົາຕັດມັນອອກເສຍ
ຢ່າໃຫ້ເປັນປະຊາຊາດ’ ເມືອງມັດເມັນເອີຍ ເຈົ້າກໍຈະຖືກຕັດລົງຄືກັນ ດາບຈະໄລ່ຕິດຕາມເຈົ້າ
ໄປ 3ຈະມີສຽງຮ້ອງມາແຕ່ໂຮໂຣນາຢີມວ່າ ‘ການເສົ້າໃຈ ແລະການທໍາລາຍຢ່າງໃຫຍ່ຫລວງ’
4ເມືອງໂມອາບຖືກທໍາລາຍເສຍແລ້ວ ໄດ້ຍິນສຽງຮ້ອງໄຫ້ຈາກພວກເດັກນ້ອຍຂອງນາງ 5ພວກ
ເຂົາຈະຂຶ້ນໄປຮ້ອງໄຫ້ຢູ່ທາງຂຶ້ນເມືອງລູຮິດ ເພາະພວກສັດຕູໄດ້ຍິນສຽງຮ້ອງໄຫ້ຍ້ອນການທໍາ-
ລາຍ ຢູ່ທາງລົງຈາກເມືອງໂຮໂຣນາຢີມ 6ຈົ່ງໜີເອົາຕົວລອດສາ ຈົ່ງເປັນເໝືອນພຸ່ມໄມ້ທີ່ຢູ່ໃນ
ຖິ່ນແຫ້ງແລ້ງກັນດານ 7ເພາະວ່າເຈົ້າໄດ້ວາງໃຈໃນຜົນງານ ແລະໃນຊັບສົມບັດຂອງເຈົ້າ ເຈົ້າ
ຈະຕ້ອງຖືກຍຶດ ແລະພະເຄໂມດຈະຕ້ອງຖືກກວາດໄປເປັນຊະເລີຍ ພ້ອມກັບປະໂລຫິດ ແລະ
ເຈົ້ານາຍຂອງຕົນ 8ຜູ້ທໍາລາຍຈະມາເໜືອເມືອງທຸກເມືອງ ແລະບໍ່ມີເມືອງໃດຈະລອດພົ້ນໄປໄດ້
ພູເຂົາຈະຕ້ອງພິນາດ ແລະທົ່ງພຽງຈະຕ້ອງຖືກທໍາລາຍ ດັ່ງທີ່ພຣະຜູ້ເປັນເຈົ້າຊົງລັ່ນພຣະຄໍາ
ເວົ້າໄວ້ 9ຈົ່ງໃຫ້ປີກແກ່ໂມອາບ ເພື່ອວ່າມັນຈະບິນໄປເສຍ ຫົວເມືອງຂອງມັນຈະກາຍເປັນທີ່ຮົກ
ຮ້າງ ບໍ່ມີຄົນອາໄສຢູ່ໃນນັ້ນເລີຍ 10ຜູ້ໃດເຮັດວຽກຂອງພຣະຜູ້ເປັນເຈົ້າຢ່າງບໍ່ສັດຊື່ ຜູ້ນັ້ນກໍຖືກ
ສາບແຊ່ງ ຜູ້ທີ່ກັນບໍ່ໃຫ້ດາບຂອງຕົນເຮັດໃຫ້ຄົນເລືອດຕົກ ຜູ້ນັ້ນຈະຖືກສາບແຊ່ງ 11ໂມອາບ
ສະບາຍຕັ້ງແຕ່ໜຸ່ມໆມາ ແລະໄດ້ຕົກເຮ່ຍໄປ ມັນບໍ່ໄດ້ຖືກຖ່າຍອອກຈາກພາຊະນະນີ້ໄປພາຊະ-
ນະນັ້ນ ຫລືຕ້ອງຖືກກວາດໄປເປັນຊະເລີຍ ດັ່ງນັ້ນ ລົດຊາດຈຶ່ງຍັງຢູ່ໃນນັ້ນ ແລະກິ່ນກໍບໍ່ປ່ຽນ-

ແປງ” [12]ພຣະຜູ້ເປັນເຈົ້າກ່າວວ່າ “ເພາະສະນັ້ນ ເບິ່ງແມ ວັນເວລາຈະມາເຖິງ ເມື່ອເຮົາຈະສົ່ງ
ນັກທ່ອງທຸ່ງວມາໃຫ້ລາວເພື່ອເຮັດໃຫ້ລາວທ່ອງທຸ່ງວໄປ ແລະຖອກພາຊະນະຂອງລາວໃຫ້ກ້ຽງ
ແລະຕີໄຫຂອງລາວໃຫ້ແຕກເປັນປ່ຽງໆ [13]ແລ້ວໂມອາບກໍຈະໄດ້ອັບອາຍເພາະພະເຄໂມດ
ເໝືອນທີ່ເຊື້ອສາຍອິສຣາເອນໄດ້ອັບອາຍເພາະເບັດເອນ ອັນເປັນທີ່ວາງໃຈຂອງພວກເຂົາ
[14]ເຈົ້າຈະວ່າຢ່າງໃດໄດ້ວ່າ ‘ເຮົາເປັນພວກວິລະຊົນ ແລະທະຫານສຳລັບສົງຄາມ’ [15]ເມືອງໂມ-
ອາບຖືກທຳລາຍ ແລະຂຶ້ນໄປຈາກຫົວເມືອງຂອງມັນແລ້ວ ແລະຄົນໜຸ່ມທີ່ຄັດເລືອກແລ້ວກໍລົງ
ໄປສູ່ການຖືກຂ້າ ພຣະມະຫາກະສັດຜູ້ຊົງພຣະນາມວ່າ ພຣະຜູ້ເປັນເຈົ້າຈອມໂຍທາ ກ່າວດັ່ງນີ້
ແຫລະ [16]ໄພພິບັດຂອງໂມອາບຢູ່ໃກ້ແລ້ວ ແລະຄວາມທຸກໃຈຂອງລາວກໍຫລັ່ງເຂົ້າມາ [17]ບັນ-
ດາຜູ້ທີ່ຢູ່ຮອບລາວ ຈົ່ງເສຍໃຈນຳເຂົາສາ ແລະບັນດາຜູ້ທີ່ຮູ້ຈັກຊື່ລາວດ້ວຍ ຈົ່ງກ່າວວ່າ ‘ໄມ້
ທານພະກັນອັນຊົງລິດທັກເສຍແລ້ວ ຄືຄະທາອຳນາດອັນຮຸ່ງເຮືອງນັ້ນ’ [18]ທິດາຜູ້ອາໄສໃນເມືອງ
ດີໂບນເອີຍ ຈົ່ງລົງມາຈາກສະຫງ່າລາສີຂອງເຈົ້າ ແລະນັ່ງດ້ວຍຄວາມກະຫາຍ ເພາະຜູ້ທຳລາຍ
ໂມອາບຈະມາສູ້ກັບເຈົ້າ ເຂົາຈະທຳລາຍທີ່ກຳບັງເຂັ້ມແຂງຂອງເຈົ້າ [19]ຊາວເມືອງອາໂຣເອເອີຍ
ຈົ່ງຢືນເຝົ້າຢູ່ຂ້າງທາງ ຈົ່ງຖາມຊາຍທີ່ໜີມາ ແລະຜູ້ຍິງທີ່ລອດພົ້ນມາວ່າ ‘ເກີດເລື່ອງຫຍັງຂຶ້ນ’
[20]ໂມອາບຖືກເຮັດໃຫ້ອັບອາຍ ເພາະມັນແຕກເສຍແລ້ວ ຮ້ອງຄາງ ແລະຮ້ອງໄຫ້ຮ່ຳໄຮຢູ່ ຈົ່ງ
ບອກແຖວແມ່ນ້ຳອາໂນນວ່າ ‘ໂມອາບຖືກທຳລາຍເສຍແລ້ວ’

[21]ການພິພາກສາໄດ້ຕົກເໜືອທີ່ງພຽງ ເໜືອໂຮໂລນ ຢາຊາ ແລະເມຟະອາດ [22]ແລະດີໂບນ
ເນໂບ ແລະເບັດ-ດິບລາທາຢິມ [23]ແລະກີຣິອາດທາຢິມ ເບັດ-ກາມູນ ແລະເບັດ-ເມໂອນ
[24]ແລະເກຣິໂຢດ ໂບຊະຣາ ແລະຫົວເມືອງທັງໝົດຂອງແຜ່ນດິນໂມອາບ ທັງໄກ ແລະໃກ້

[25]ພຣະຜູ້ເປັນເຈົ້າກ່າວວ່າ ເຂົາຂອງໂມອາບຖືກຕັດອອກແລ້ວ ແລະແຂນຂອງມັນກໍຫັກ
[26]ຈົ່ງເຮັດໃຫ້ລາວມຶນເມົາ ຍ້ອນລາວໄດ້ພອງຕົວຂຶ້ນຕໍ່ພຣະຜູ້ເປັນເຈົ້າ ເພາະສະນັ້ນ ໂມອາບ
ຈະຕ້ອງກິ້ງເກືອກຢູ່ໃນຮາກຂອງຕົນ ແລະຈະຖືກເຍາະເຍີ້ຍດ້ວຍ [27]ອິສຣາເອນບໍ່ຖືກເຈົ້າເຍາະ-
ເຍີ້ຍບໍ ໄປພົບລາວຢູ່ທ່າມກາງໂຈນບໍ ເມື່ອເຈົ້າເວົ້າເຖິງລາວ ເຈົ້າຈຶ່ງໂດດເຕັ້ນດ້ວຍຄວາມປິຕິ-
ຍິນດີ [28]ຊາວເມືອງໂມອາບເອີຍ ຈົ່ງອອກເສຍຈາກຫົວເມືອງໄປອາໄສຢູ່ໃນຫີນ ຈົ່ງເປັນເໝືອນ
ນົກເຂົາຊຶ່ງເຮັດຮັງຢູ່ຂ້າງປາກຖ້ຳ [29]ເຮົາໄດ້ຍິນເຖິງຄວາມອວດຕົວຂອງໂມອາບ (ລາວອວດ
ຕົວຫລາຍ) ໄດ້ຍິນເຖິງຄວາມອວດດີ ຄວາມຈອງຫອງຂອງລາວ ແລະຄວາມອວດຕົວຂອງ
ລາວ ແລະເຖິງການຍົກຕົນຂົ່ມເພິ່ນໃນໃຈຂອງລາວ [30]ພຣະຜູ້ເປັນເຈົ້າກ່າວວ່າ ເຮົາຮູ້ຄວາມ
ຮ້າຍຂອງລາວ ແຕ່ມັນຈະບໍ່ສຳເລັດ ຄວາມບໍ່ຈິງທັງຫລາຍຂອງລາວຈະບໍ່ເຖິງຄວາມສຳເລັດ
[31]ເພາະສະນັ້ນ ເຮົາຈະຮ້ອງຄາງເພື່ອໂມອາບ ເຮົາຈະຮ້ອງໄຫ້ຮ່ຳໄຮເພື່ອໂມອາບທັງຫລາຍ
ໃຈຂອງເຮົາຈະຄ່ຳຄວນເພື່ອຄົນຂອງກີເຣ-ຮາເຣເສັດ [32]ເຄືອອະງຸ່ນແຫ່ງສິບມາເອີຍ ເຮົາຈະ
ຮ້ອງໄຫ້ເພື່ອເຈົ້າຫລາຍກວ່າເພື່ອຢາເຊ ກິ່ງທັງຫລາຍຂອງເຈົ້າຍື່ນຂ້າມທະເລຈົນເຖິງທະເລ
ຂອງຢາເຊ ຜູ້ທຳລາຍໄດ້ໂຈມຕີໝາກໄມ້ລະດູຮ້ອນ ແລະການເກັບອະງຸ່ນຂອງເຈົ້າ [33]ຄວາມ
ຍິນດີ ແລະຄວາມຊື່ນບານໄດ້ຖືກກວາດອອກໄປເສຍຈາກສວນໄຮ່ນາ ແລະແຜ່ນດິນຂອງໂມ-
ອາບ ເຮົາໄດ້ເຮັດໃຫ້ເຫລົ້າອະງຸ່ນຢຸດໄຫລຈາກໄຫອະງຸ່ນ ບໍ່ມີຄົນຢຽບອະງຸ່ນດ້ວຍສຽງໂຫ່ຮ້ອງ

ສຽງໂຫ່ຮ້ອງນັ້ນບໍ່ແມ່ນສຽງໂຫ່ຮ້ອງເລີຍ 34ເມືອງເຮັດຊະໂບນ ແລະເມືອງເອເລອາເລໄດ້
ຮ້ອງໄຫ້ຮໍ່າໄຮ ພວກເຂົາສົ່ງສຽງຮ້ອງໄກເຖິງເມືອງຢາຮາດ ຈາກໂຊອາເຖິງໂຮໂຣນາຢິມ
ເໝືອນດັ່ງງົວໂຕແມ່ອາຍຸສາມປີ ເພາະນໍ້າທັງຫລາຍແຫ່ງນິມຣິມກໍຈະຮົກຮ້າງດ້ວຍ 35ພຣະຜູ້-
ເປັນເຈົ້າກ່າວວ່າ ເຮົາຈະນຳອະວະສານມາສູ່ຜູ້ທີ່ຖວາຍເຄື່ອງບູຊາໃນແທ່ນບູຊາສູງ ແລະເຜົາ
ເຄື່ອງຫອມຖວາຍພະຂອງລາວໃນໂມອາບ 36ເພາະສະນັ້ນ ໃຈຂອງເຮົາຈະຄໍ່າຄວນເພື່ອໂມ-
ອາບເໝືອນຂຸ່ຍ ແລະໃຈຂອງເຮົາຈະຄໍ່າຄວນເໝືອນຂຸ່ຍເພື່ອຄົນເມືອງກີເຣ-ຮາເຣເຊັດ ເພາະ
ຊັບສົມບັດທີ່ລາວໄດ້ມາກໍໄດ້ພິນາດ 37ທຸກຫົວຈະຖືກແຖ ແລະທຸກເຄົາຈະຖືກຕັດ ເທິງມືທັງ
ປວງຈະມີຮອຍປາດ ແລະຈະມີຜ້າກະສອບຢູ່ບັ້ນແອວ 38ເທິງຫລັງຄາເຮືອນທັງໝົດຂອງໂມ-
ອາບ ແລະຕາມຖະໜົນຫົນທາງແຫ່ງເມືອງນັ້ນຈະມີແຕ່ສຽງຄໍ່າຄວນທົ່ວໄປ ເພາະເຮົາຕີໂມ-
ອາບເໝືອນກັບເຮົາຕີພາຊະນະທີ່ເຮົາບໍ່ພໍໃຈ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ 39ພວກເຂົາຈະ
ຮ້ອງຄາງວ່າ ‘ໂມອາບແຕກແລ້ວນໍ ໂມອາບຫັນຫລັງກັບດ້ວຍຄວາມອັບອາຍແລ້ວນໍ’ ດັ່ງນັ້ນ
ແຫລະ ໂມອາບໄດ້ກາຍເປັນທີ່ເຍາະເຍີ້ຍ ແລະເປັນທີ່ປະຫລາດໃຈແກ່ບັນດາຜູ້ທີ່ຢູ່ອ້ອມຮອບ
ລາວ” 40ເພາະພຣະຜູ້ເປັນເຈົ້າກ່າວວ່າ “ເບິ່ງແມ ຜູ້ໜຶ່ງຈະເຈີດລົງມາເໝືອນນົກອິນຊີ ແລະ
ກາງປີກອອກສູ້ໂມອາບ 41ເກຣິໂຢດຖືກຈັບໄປ ແລະທີ່ກຳບັງອັນເຂັ້ມແຂງຖືກຍຶດ ຈິດໃຈຂອງ
ບັນດານັກຮົບແຫ່ງໂມອາບໃນມື້ນັ້ນຈະເໝືອນກັບຈິດໃຈຂອງຜູ້ຍິງຊຶ່ງກຳລັງເຈັບທ້ອງເກີດລູກ
42ໂມອາບຈະຖືກທຳລາຍ ແລະບໍ່ເປັນຊົນຊາດໜຶ່ງອີກຕໍ່ໄປ ເພາະວ່າລາວພອງຕົວຂຶ້ນຕໍ່ພຣະ-
ຜູ້ເປັນເຈົ້າ 43ພຣະຜູ້ເປັນເຈົ້າກ່າວວ່າ ຊາວເມືອງໂມອາບເອີຍ ຄວາມຢ້ານຫົວ, ຂຸມ ແລະກັບ
ດັກ ຈະຢູ່ເໜືອເຈົ້າ 44ຜູ້ໃດທີ່ໜີຈາກຄວາມຢ້ານກົວຈະຕົກຂຸມ ແລະຜູ້ທີ່ປີນອອກມາຈາກຂຸມກໍ
ຈະຕິດກັບ ເພາະເຮົາຈະນຳສິ່ງເຫລົ່ານີ້ມາເໜືອໂມອາບ ໃນປີແຫ່ງການລົງໂທດເຂົາ ພຣະຜູ້-
ເປັນເຈົ້າກ່າວດັ່ງນີ້ແຫລະ 45ຜູ້ລີ້ໄພໄດ້ໄປຢືນຢູ່ຢ່າງໝົດແຮງໃນເງົາເມືອງເຮັດຊະໂບນ ເພາະ-
ວ່າໄຟຈະອອກມາຈາກເຮັດຊະໂບນ ແປວໄຟຈະອອກມາຈາກທ່າມກາງສີໂຮນ ມັນຈະທຳລາຍ
ດິນແດນຂອງໂມອາບ ແລະຂະໝ່ອມຂອງບັນດາຄົນແຫ່ງຄວາມວຸ້ນວາຍ 46ໂມອາບເອີຍ ວິ-
ບັດແກ່ເຈົ້າ ຊົນຊາດແຫ່ງພະເຄໂມດກຳລັງວອດວາຍຢູ່ແລ້ວ ເພາະບັນດາລູກຊາຍຂອງເຈົ້າຖືກ
ຈັບໄປເປັນຊະເລີຍ ແລະລູກສາວຂອງເຈົ້າກໍເຂົ້າເປັນຊະເລີຍ 47ແຕ່ເຮົາຍັງຈະໃຫ້ໂມອາບກັບສູ່
ສະພາບເດີມໃນຕໍ່ໄປ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ” ຂໍ້ພິພາກສາໂມອາບກໍມີເທົ່ານີ້ແຫລະ

# ບົດທີ 49

## ຄຳຜູ້ປະກາດພຣະທຳເລື່ອງຄົນອຳໂມນ

1ກ່ຽວກັບເລື່ອງຄົນອຳໂມນ ພຣະຜູ້ເປັນເຈົ້າກ່າວວ່າ “ອິສຣາເອນບໍ່ມີລູກຊາຍບໍ ລາວບໍ່ມີ
ທາຍາດບໍ ແລ້ວເປັນຫຍັງກະສັດຂອງພວກເຂົາຈຶ່ງຮັບເອົາຄາດເປັນມໍລະດົກ ແລະປະຊາຊົນ
ຂອງເພິ່ນອາໄສຢູ່ໃນຫົວເມືອງຂອງຕົນ 2ພຣະຜູ້ເປັນເຈົ້າກ່າວວ່າ ເພາະສະນັ້ນ ເບິ່ງແມ ວັນ
ເວລາຈະມາເຖິງ ເມື່ອເຮົາຈະເຮັດໃຫ້ໄດ້ຍິນສຽງສັນຍານສົງຄາມ ສູ້ກັບນະຄອນຣັບບາຂອງ
ຄົນອຳໂມນ ມັນຈະກາຍເປັນກອງຊາກເມືອງທີ່ຮົກຮ້າງ ແລະຊົນນະບົດຂອງເມືອງນັ້ນຈະຖືກ

ເຜົາເສຍດ້ວຍໄຟ ແລ້ວອິສຣາເອນຈະເຂົ້າຮັບມໍລະດົກຈາກຜູ້ທີ່ເຂົ້າຮັບມໍລະດົກຈາກຕົນ ພຣະ-
ຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ [3]ເຮັດຊະໂບນ ເອີຍ ຈົ່ງຮ້ອງຄາງ ເພາະເມືອງອາອີຖືກທຳລາຍ
ບຸດສາວແຫ່ງນະຄອນຣັບບາ ເອີຍ ຈົ່ງຮ້ອງໄຫ້ຮ່ຳໄຮ ຈົ່ງເອົາຜ້າກະສອບຄາດແອວໄວ້ ຈົ່ງຄໍ່າ
ຄວນ ແລ່ນໄປແລ່ນມາຢູ່ທ່າມກາງຮົ້ວ ເພາະກະສັດຂອງພວກເຂົາຈະຕ້ອງຖືກກວາດໄປເປັນ
ຊະເລີຍ ພ້ອມກັບປະໂລຫິດ ແລະເຈົ້ານາຍຂອງມັນ [4]ບຸດສາວຜູ້ຫລອກລວງເອີຍ ເປັນຫຍັງ
ເຈົ້າໂອ້ອວດບັນດາພູເຂົາ ພູເຂົາຂອງເຈົ້າມີນໍ້າໄຫລ ຜູ້ວາງໃຈໃນສົມບັດຂອງຕົນວ່າ ‘ໃຜຈະມາ
ສູ້ຂ້ອຍນະ’ [5]ອົງພຣະຜູ້ເປັນເຈົ້າພຣະເຈົ້າຈອມໂຍທາກ່າວວ່າ ເບິ່ງແມ ເຮົາຈະນຳຄວາມຢ້ານ
ກົວມາເໜືອເຈົ້າ ຈາກທຸກຄົນທີ່ຢູ່ຮອບຕົວເຈົ້າ ແລະເຈົ້າຈະຖືກຂັບໄລ່ອອກໄປ ຊາຍທຸກຄົນມຸ່ງ
ໜ້າອອກໄປ ແລະຈະບໍ່ມີໃຜຮວບຮວມຄົນລີ້ໄພໄດ້ [6]ແຕ່ພາຍຫລັງເຮົາຈະໃຫ້ຄົນອຳໂມນກັບສູ່
ສະພາບເດີມ” ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ

## ຄຳຜູ້ປະກາດພຣະທຳເລື່ອງເມືອງເອໂດມ

[7]ກ່ຽວກັບເມືອງເອໂດມ ພຣະຜູ້ເປັນເຈົ້າຈອມໂຍທາ ກ່າວດັ່ງນີ້ວ່າ “ສະຕິປັນຍາບໍ່ມີໃນເຕ-
ມານອີກແລ້ວບໍ ຄຳປຶກສາພິນາດໄປຈາກຜູ້ສະຫລຽວສະຫລາດແລ້ວບໍ ສະຕິປັນຍາຂອງເຂົາ
ຫາຍສູນໄປແລ້ວບໍ [8]ຊາວເມືອງເດດານ ເອີຍ ຈົ່ງໜີ ຈົ່ງຖອຍຫລັງກັບ ຈົ່ງອາໄສໃນບ່ອນເລິກ
ເພາະວ່າເຮົາຈະນຳໄພພິບັດຂອງເອຊາວມາເໜືອພວກເຂົາ ເວລາເຮົາຈະລົງໂທດເຂົາ [9]ຖ້າຄົນ
ເກັບອະງຸ່ນມາຫາເຈົ້າ ລາວຈະບໍ່ຖິ້ມອະງຸ່ນຕົກຄ້າງໄວ້ນຳບໍ ຖ້າຂີ້ລັກມາຕອນກາງຄືນ ລາວຈະ
ບໍ່ທຳລາຍພຽງພໍແກ່ຕົວລາວເທົ່ານັ້ນບໍ [10]ແຕ່ເຮົາໄດ້ເປືອຍເອຊາວໃຫ້ເປືອຍເລີຍ ເຮົາໄດ້ເປີດ
ບ່ອນຮັບຂອງລາວ ແລະລາວບໍ່ສາມາດເຊື່ອງຕົວໄດ້ ເຊື້ອສາຍຂອງລາວຖືກທຳລາຍ ພີ່ນ້ອງ
ຂອງລາວ ແລະເພື່ອນບ້ານຂອງລາວ ບໍ່ມີລາວອີກແລ້ວ [11]ຈົ່ງຖິ້ມເດັກກຳພ້າພໍ່ຂອງເຈົ້າໄວ້ເຖີດ
ເຮົາຈະໃຫ້ເຂົາມີຊີວິດຢູ່ ແລະໃຫ້ແມ່ໝ້າຍຂອງເຈົ້າວາງໃຈໃນເຮົາສາ”

[12]ເພາະພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ “ເບິ່ງແມ ຖ້າຄົນທີ່ຍັງບໍ່ສົມຄວນຈະດື່ມຈາກຖ້ວຍນັ້ນ
ຍັງຕ້ອງດື່ມ ເຈົ້າຈະພົ້ນໂທດໄປໄດ້ບໍ ເຈົ້າຈະພົ້ນໂທດໄປບໍ່ໄດ້ ເຈົ້າຈະຕ້ອງດື່ມ [13]ພຣະຜູ້ເປັນ-
ເຈົ້າກ່າວວ່າ ເຮົາໄດ້ປະຕິຍານໂດຍນາມຂອງເຮົາແລ້ວວ່າ ໂບຊະຣາຈະຕ້ອງກາຍເປັນບ່ອນ
ວ່າງເປົ່າເສຍ ເປັນທີ່ນິນທາ ເປັນບ່ອນຖິ້ມຮ້າງ ແລະເປັນຄຳສາບແຊ່ງ ແລະຫົວເມືອງທັງໝົດ
ຂອງລາວຈະເປັນບ່ອນຖິ້ມຮ້າງເປັນນິດ”

[14]ຂ້າພະເຈົ້າໄດ້ຍິນຂ່າວຈາກພຣະຜູ້ເປັນເຈົ້າ ຜູ້ສົ່ງຂ່າວຄົນໜຶ່ງຖືກສົ່ງໄປທ່າມກາງບັນດາ
ປະຊາຊາດ ບອກວ່າ “ຈົ່ງຮວບຮວມເຈົ້າທັງຫລາຍເຂົ້າມາຕໍ່ສູ້ເມືອງນັ້ນ ແລະລຸກຂຶ້ນເພື່ອເຮັດ
ສົງຄາມສາ [15]ເພາະວ່າ ເບິ່ງແມ ເຮົາຈະເຮັດໃຫ້ເຈົ້ານ້ອຍທ່າມກາງບັນດາປະຊາຊາດ ໃຫ້ເປັນ
ທີ່ໝິ່ນປະໝາດທ່າມກາງມະນຸດ [16]ເພາະຄວາມຢ້ານກົວຂອງເຈົ້າໄດ້ຫລອກລວງເຈົ້າ ທັງຄວາມ
ອວດຕົວແຫ່ງໃຈຂອງເຈົ້າ ເຈົ້າຜູ້ຊຶ່ງອາໄສຢູ່ໃນຖໍ້າຫີນ ຜູ້ຍຶດຍອດພູເຂົາໄວ້ເອີຍ ແມ່ນເຈົ້າເຮັດ
ຮັງຂອງເຈົ້າສູງເໝືອນຢ່າງຮັງນົກອິນຊີ ເຮົາຈະຍົກເຈົ້າລົງມາຈາກບ່ອນນັ້ນ ພຣະຜູ້ເປັນເຈົ້າ
ກ່າວດັ່ງນີ້ແຫລະ [17]ເອໂດມຈະກາຍເປັນບ່ອນວ່າງເປົ່າ ທຸກຄົນທີ່ຜ່ານເຂົາໄປຈະຕົກໃຈ ແລະ
ຈະເຍາະເຍີ້ຍເພາະໄພພິບັດທັງໝົດຂອງມັນ [18]ເໝືອນດັ່ງເມືອງໂຊໂດມ ແລະເມືອງໂກໂມຣາ

ແລະຫົວເມືອງໃກ້ຄຽງຂອງມັນຖືກທຳລາຍລ້າງ ພຣະຜູ້ເປັນເຈົ້າກ່າວວ່າ ບໍ່ມີໃຜຈະພັກຢູ່ບ່ອນ
ນັ້ນ ບໍ່ມີບຸດຂອງມະນຸດຄົນໃດຈະອາໄສໃນເມືອງນັ້ນ [19]ເບິ່ງແມ ລາວຈະຂຶ້ນມາເໝືອນໂຕສິງ
ຈາກດົງລຸ່ມແມ່ນ້ຳຢໍແດນ ໂດດເຂົ້າໃສ່ຄອກແກະທີ່ແຂງແຮງ ແຕ່ເຮົາຈະເຮັດໃຫ້ມັນໜີໄປຈາກ
ນາງຢ່າງວ່ອງໄວ ແລະໃຜເປັນຜູ້ທີ່ເລືອກສັນໄວ້ ທີ່ເຮົາຈະແຕ່ງຕັ້ງໄວ້ເໜືອນາງ ມີໃຜເປັນຢ່າງ
ເຮົາບໍ ໃຜຈະນັດເຮົາບໍ ຜູ້ລ້ຽງແກະຄົນໃດຈະທົນຢືນຢູ່ຕໍ່ໜ້າເຮົາໄດ້ [20]ເພາະສະນັ້ນ ຈົ່ງຟັງ
ແຜນການຊຶ່ງພຣະຜູ້ເປັນເຈົ້າຊົງເຮັດໄວ້ຕໍ່ສູ້ເມືອງເອໂດມ ແລະບັນດາພຣະປະສົງຊຶ່ງພຣະອົງ
ໄດ້ດຳລິຂຶ້ນຕໍ່ສູ້ຊາວເມືອງເຕມານ ຄືເຖິງໂຕນ້ອຍທີ່ສຸດທີ່ຢູ່ໃນຝູງກໍຈະຕ້ອງຖືກລາກເອົາໄປ
ຄອກແກະຂອງພວກເຂົານັ້ນຈະວ່າງເປົ່າເສຍ [21]ແຜ່ນດິນໂລກສັ່ນສະເທືອນ ເພາະສຽງທີ່ມັນລົ້ມ
ສຽງຮ້ອງຄາງຂອງມັນໄດ້ຍິນເຖິງທະເລແດງ [22]ເບິ່ງແມ ຜູ້ໜຶ່ງຈະເຫາະຂຶ້ນ ແລະເຈີດລົງ
ເໝືອນນົກອິນຊີ ແລະກາງປີກຂອງມັນອອກສູ້ໂບຊະຣາ ແລະຈິດໃຈຂອງນັກຮົບແຫ່ງເອໂດມ
ໃນມື້ນັ້ນຈະເປັນເໝືອນຈິດໃຈຂອງຍິງເຈັບທ້ອງເກີດລູກ

## ຄຳຜູ້ປະກາດພຣະທຳເລື່ອງເມືອງດາມາເຊ

[23]ກ່ຽວກັບເລື່ອງເມືອງດາມາເຊ ເມືອງຮຳມາດ ແລະເມືອງອາປາດໄດ້ຂາຍໜ້າ ເພາະ
ພວກເຂົາໄດ້ຍິນຂ່າວຮ້າຍ ພວກເຂົາກໍຢ້ານກົວຕົວສັ່ນ ທະເລກໍວຸ້ນວາຍ ມັນສະຫງົບລົງບໍ່ໄດ້
[24]ເມືອງດາມາເຊກໍອ່ອນເພຍແລ້ວ ນາງຫັນໜີ ແລະຄວາມກົວຕົວສັ່ນກໍຈະຈັບນາງໄວ້ ຄວາມ-
ທຸກທໍລະມານໃຈ ແລະຄວາມເສົ້າຍຶດນາງໄວ້ເໝືອນກັບຜູ້ຍິງກຳລັງເກີດລູກ [25]ເມືອງແຫ່ງການ
ສັນລະເສີນນັ້ນຖືກປະຖິ້ມແລ້ວນໍ ຄືເມືອງທີ່ເຕັມດ້ວຍຄວາມຊື່ນບານນັ້ນ [26]ເພາະສະນັ້ນ ຄົນ
ໜຸ່ມຂອງເມືອງນັ້ນຈະລົ້ມລົງຕາມຖະໜົນ ແລະບັນດາທະຫານຂອງເມືອງນັ້ນຈະຖືກຕັດອອກໃນ
ມື້ນັ້ນ ພຣະຜູ້ເປັນເຈົ້າຈອມໂຍທາກ່າວດັ່ງນີ້ແຫລະ [27]ແລະເຮົາຈະກໍ່ໄຟຂຶ້ນໃນກຳແພງເມືອງ
ດາມາເຊ ແລະໄຟນັ້ນຈະກິນພະລາຊະວັງຂອງເບັນຮາດັດເສຍ

## ຄຳຜູ້ປະກາດພຣະທຳເລື່ອງເມືອງເກດາ

[28]ກ່ຽວກັບເລື່ອງຄົນເກດາ ແລະລາຊະອານາຈັກຮາໂຊ ຊຶ່ງເນບູກາດເນັດຊາກະສັດແຫ່ງ
ບາບີໂລນຈະໂຈມຕີ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ຈົ່ງລຸກຂຶ້ນ ຮີບເຂົ້າໄປສູ້ຄົນເກດາ ຈົ່ງທຳ-
ລາຍປະຊາຊົນແຫ່ງຕາເວັນອອກເສຍ [29]ເຕັນ ແລະຝູງແບ້ແກະຂອງພວກເຂົາຈະຖືກປຸ້ນ ທັງ
ຜ້າກັ້ງ ແລະພາຊະນະທັງໝົດຂອງພວກເຂົາ ອູດຂອງພວກເຂົາຈະຖືກນຳເອົາໄປຈາກພວກເຂົາ
ແລະຄົນຈະຮ້ອງແກ່ເຂົາວ່າ ‘ຄວາມຕົກໃຈຢ້ານມີຢູ່ທຸກດ້ານ’ [30]ພຣະຜູ້ເປັນເຈົ້າກ່າວວ່າ ຊາວ
ເມືອງຮາໂຊເອີຍ ໜີເຖີດ ຈົ່ງໜີໄປໄກໆ ໄປອາໄສໃນບ່ອນເລິກ ເພາະເນບູກາດເນັດຊາ ກະ-
ສັດແຫ່ງບາບີໂລນໄດ້ດຳລິແຜນການຕໍ່ສູ້ເຈົ້າ ແລະກໍ່ຕັ້ງຄວາມປະສົງໄວ້ສູ້ເຈົ້າ [31]ພຣະຜູ້ເປັນ-
ເຈົ້າກ່າວວ່າ ຈົ່ງລຸກຂຶ້ນ ມຸ່ງໜ້າໄປສູ້ປະຊາຊາດໜຶ່ງທີ່ຮັ່ງມີ ຊຶ່ງອາໄສຢູ່ຢ່າງໝັ້ນຄົງ ບໍ່ມີປະຕູ
ເມືອງແລະບໍ່ມີດານປະຕູ ຢູ່ແຕ່ຜູ້ດຽວ [32]ອູດຂອງພວກເຂົາຈະກາຍເປັນເຄື່ອງທີ່ປຸ້ນມາໄດ້ ແລະ
ຝູງງົວອັນຫລວງຫລາຍຂອງພວກເຂົາຈະເປັນເຄື່ອງທີ່ປຸ້ນມາ ພຣະຜູ້ເປັນເຈົ້າກ່າວວ່າ ເຮົາຈະ
ກະຈາຍພວກເຂົາໄປທຸກທິດລົມ ຄືຄົນທີ່ຢູ່ໃນມຸມທີ່ໄກທີ່ສຸດ ແລະເຮົາຈະນຳໄພພິບັດມາຈາກທຸກ
ດ້ານຂອງພວກເຂົາ [33]ເມືອງຮາໂຊຈະເປັນບ່ອນອາໄສຂອງໝາປ່າ ເປັນບ່ອນຖິ້ມຮ້າງຢູ່ເປັນນິດ

ບໍ່ມີໃຜຈະພັກອາໃສຢູ່ບ່ອນນັ້ນ ບໍ່ມີບຸດຂອງມະນຸດຄົນໃດຈະອາໄສໃນນັ້ນ"

## ຄຳຜູ້ປະກາດພຣະທຳເລື່ອງເມືອງເອລາມ

[34]ພຣະທຳຂອງ ພຣະຜູ້ເປັນເຈົ້າ ຊຶ່ງມາຍັງ ເຢເຣມີຢາ ຜູ້ປະກາດພຣະທຳກ່ຽວກັບ ເມືອງ ເອ-
ລາມ ໃນຕອນຕົ້ນລາຊະການ ເຊເດກີຢາ ກະສັດແຫ່ງ ຢູດາ ວ່າ
[35]"ພຣະຜູ້ເປັນເຈົ້າ ຈອມໂຍທາກ່າວດັ່ງນີ້ວ່າ ເບິ່ງແມ ເຮົາຈະຫັກຄັນທະນູຂອງ ເອລາມ ຊຶ່ງ
ເປັນຫົວໃຈແຫ່ງກຳລັງຂອງພວກເຂົາ [36]ແລະເຮົາຈະນຳລົມທັງສີ່ທິດຈາກຟ້າທັງສີ່ສ່ວນມາສູ່ ເອ-
ລາມ ແລະເຮົາຈະກະຈາຍພວກເຂົາໄປຕາມລົມເຫລົ່ານັ້ນທັງໝົດ ຈະບໍ່ມີປະຊາຊາດໃດຊຶ່ງຜູ້
ຖືກຂັບໄລ່ອອກໄປຈາກ ເອລາມ ຈະມາບໍ່ເຖິງ [37]ດ້ວຍວ່າເຮົາຈະເຮັດໃຫ້ ເອລາມ ຢ້ານກົວຕໍ່ໜ້າ
ສັດຕູຂອງພວກເຂົາ ແລະຕໍ່ໜ້າຜູ້ທີ່ສະແຫວງຫາຊີວິດຂອງພວກເຂົາ ພຣະຜູ້ເປັນເຈົ້າ ກ່າວວ່າ
ເຮົາຈະນຳເຫດຮ້າຍມາເຖິງພວກເຂົາ ຄືຄວາມພິໂລດອັນແຮງກ້າ ເຮົາຈະໃຊ້ໃຫ້ດາບໄລ່ຕາມ
ພວກເຂົາທັງຫລາຍ ຈະໜັກໄປກວ່ານັ້ນອີກ ຄືເຮົາຈະໄດ້ເຜົາຜານພວກເຂົາເສຍ [38]ເຮົາຈະຕັ້ງ
ພຣະທີ່ນັ່ງຂອງ ເຮົາໃນ ເອລາມ ແລະຈະທຳລາຍກະສັດ ແລະບັນດາເຈົ້ານາຍຂອງພວກເຂົາ
ພຣະຜູ້ເປັນເຈົ້າ ກ່າວດັ່ງນີ້ແຫລະ [39]ພຣະຜູ້ເປັນເຈົ້າ ກ່າວວ່າ ແຕ່ຕໍ່ໄປເຮົາຈະໃຫ້ ເອລາມ ກັບສູ່
ສະພາບເດີມ"

# ບົດທີ 50

## ຄຳຜູ້ປະກາດພຣະທຳເລື່ອງກຸງບາບີໂລນ ແລະຊາວບາບີໂລນ

[1]ພຣະທຳຊຶ່ງ ພຣະຜູ້ເປັນເຈົ້າ ຊົງກ່າວກັບ ບາບີໂລນ ກ່ຽວກັບ ແຜ່ນດິນຂອງຊາວ ບາບີໂລນ
ໂດຍ ເຢເຣມີຢາ ຜູ້ປະກາດພຣະທຳ ວ່າ
[2]"ຈົ່ງປະກາດທ່າມກາງບັນດາປະຊາຊາດ ແລະປ່າວປະກາດ ຈົ່ງຕັ້ງທຸງຂຶ້ນ ແລະປ່າວປະ-
ກາດ ຢ່າປິດບັງໄວ້ເລີຍ ວ່າ 'ບາບີໂລນ ຖືກຍຶດແລ້ວ ພະ ເບນ ກໍໄດ້ອັບອາຍ ພະ ເມໂຣດັກ ກໍ
ຖືກທຸບແຫລກເປັນປ່ຽງໆ ຮູບເຄົາລົບທັງຫລາຍຂອງເມືອງນັ້ນຖືກເຮັດໃຫ້ອັບອາຍ ແລະຮູບປັ້ນ
ທັງຫລາຍກໍຖືກ ແຫລກ ເປັນປ່ຽງໆ' [3]ເພາະວ່າມີປະຊາຊາດໜຶ່ງອອກຈາກທິດເໜືອໄດ້ມາຕໍ່ສູ້
ເມືອງນັ້ນ ຊຶ່ງຈະເຮັດໃຫ້ແຜ່ນດິນຂອງນາງເປັນທີ່ຮົກຮ້າງ ແລະຈະບໍ່ມີຈັກຄົນໜຶ່ງອາໄສໃນນັ້ນ
ທັງມະນຸດແລະສັດຈະໜີໄປໝົດ [4]ພຣະຜູ້ເປັນເຈົ້າ ກ່າວວ່າ ໃນວັນເຫລົ່ານັ້ນ ແລະໃນເວລານັ້ນ
ປະຊາຊົນ ອິສຣາເອນ ແລະປະຊາຊົນ ຢູດາ ຈະມາລວມກັນ ມາຮ້ອງໄຫ້ຮ່ຳໄຮ ແລະພວກເຂົາ
ຈະສະແຫວງຫາ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂອງເຂົາ [5]ພວກເຂົາຈະຖາມຫາທາງໄປຊີໂອນ ໂດຍ
ຫັນໜ້າຊື່ໄປເມືອງນັ້ນ ກ່າວວ່າ 'ມາແມ ໃຫ້ພວກເຮົາມາຕິດສະນິດກັບ ພຣະຜູ້ເປັນເຈົ້າ ໂດຍ
ເຮັດຄຳໝັ້ນສັນຍາຕະຫລອດໄປເປັນນິດຊຶ່ງຈະບໍ່ລືມເລີຍ' [6]ປະຊາຊົນຂອງເຮົາເປັນແກະທີ່ຫລົງ
ບັນດາຜູ້ລ້ຽງຂອງພວກເຂົາໄດ້ພາເຂົາຫລົງໄປ ພວກເຂົາໄປເທິງພູເຂົາ ໄດ້ຍ່າງຈາກພູເຂົາໄປ
ຫາໂນນພູ ພວກເຂົາລືມຄອກຂອງພວກເຂົາເສຍແລ້ວ [7]ບັນດາຜູ້ທີ່ພົບພວກເຂົາ ກໍກິນເຂົາ
ແລະສັດຕູຂອງພວກເຂົາໄດ້ກ່າວວ່າ 'ເຮົາບໍ່ມີຄວາມຜິດ ເພາະພວກເຂົາທັງຫລາຍໄດ້ເຮັດບາບ
ຕໍ່ ພຣະຜູ້ເປັນເຈົ້າ ຜູ້ເປັນທີ່ຢູ່ອັນທ່ຽງທຳຂອງພວກເຂົາ ຄື ພຣະຜູ້ເປັນເຈົ້າ ອັນເປັນຄວາມຫວັງ

ຂອງບັນພະບູລຸດຂອງພວກເຂົາ’ [8]ຈົ່ງໜີຈາກທ່າມກາງ ບາບີໂລນ ຈົ່ງອອກໄປເສຍຈາກແຜ່ນ-
ດິນຂອງຊາວ ບາບີໂລນ ແລະເປັນເໝືອນແບ້ໂຕຜູ້ນຳໜ້າຝູງ [9]ເພາະ ເບິ່ງແມ ເຮົາຈະປັ່ນປ່ວນ
ແລະນຳບັນດາປະຊາຊາດໃຫຍ່ໝູ່ໜຶ່ງຈາກປະເທດເໜືອມາຕໍ່ສູ້ ບາບີໂລນ ແລະພວກເຂົາຈະ
ລຳລຽງກັນມາຕໍ່ສູ້ກັບນາງ ຊຶ່ງເວລານັ້ນແຫລະ ນາງຈະຖືກຍຶດ ລູກທະນູຂອງພວກເຂົາທັງ-
ຫລາຍກໍເໝືອນນັກຮົບທີ່ມີຝີມື ບໍ່ມີຄົນໃດຈະກັບມືເປົ່າ [10]ພຣະຜູ້ເປັນເຈົ້າກ່າວວ່າ ປະເທດບາ-
ບີໂລນຈະຖືກປຸ້ນ ບັນດາຜູ້ທີ່ປຸ້ນນາງຈະອີ່ມໜຳສຳລານ [11]ບັນດາຜູ້ປຸ້ນມໍລະດົກຂອງເຮົາເອີຍ
ເຖິງວ່າເຈົ້າປິຕິຍິນດີ ເຖິງວ່າເຈົ້າສະໜຸກສະໜານ ແມ່ນເຈົ້າອ້ວນພີເໝືອນດັ່ງງົວສາວຢູ່ທີ່ທົ່ງ
ຫຍ້າ ແລະຮ້ອງເໝືອນງົວໂຕຜູ້ [12]ແມ່ຂອງເຈົ້າຈະອັບອາຍຢ່າງທີ່ສຸດ ແລະນາງທີ່ເກີດເຈົ້າຈະ
ຂາຍໜ້າ ເບິ່ງແມ ບາບີໂລນທີ່ມີຄວາມສຳຄັນໜ້ອຍໃນບັນດາປະຊາຊາດຈະເປັນຖິ່ນແຫ້ງແລ້ງ
ກັນດານ ບ່ອນແຫ້ງແລ້ງ ແລະທະເລຊາຍ [13]ເມືອງນັ້ນຈະບໍ່ມີຄົນເຂົ້າອາໄສເພາະພຣະພິໂລດ
ຂອງ ພຣະຜູ້ເປັນເຈົ້າ ແຕ່ຈະເປັນທີ່ຮົກຮ້າງ ຊຶ່ງທຸກຄົນທີ່ຜ່ານເມືອງ ບາບີໂລນ ໄປຈະປະຫລາດ
ໃຈ ແລະຈະເຍາະເຍີ້ຍເພາະໄພພິບັດທັງໝົດຂອງເມືອງນັ້ນ [14]ຈົ່ງລຳລຽງຕົວຂອງເຈົ້າທັງຫລາຍ
ເຂົ້າມາສູ້ ບາບີໂລນ ໃຫ້ຮອບດ້ານ ບັນດາຜູ້ທີ່ໂກ່ງຄັນທະນູຈົ່ງຍິງນາງ ຢ່າເສຍດາຍລູກທະນູ
ເພາະນາງໄດ້ເຮັດບາບຕໍ່ ພຣະຜູ້ເປັນເຈົ້າ [15]ຈົ່ງເປັ່ງສຽງໂຫ່ຮ້ອງສູ້ນາງໃຫ້ຮອບດ້ານ ນາງຍອມ
ພ່າຍແພ້ແລ້ວ ຮາກຖານຂອງນາງລົ້ມລົງແລ້ວ ກຳແພງຂອງນາງຖືກເພພັງແລ້ວ ເພາະນີ້ເປັນ
ການແກ້ແຄ້ນຂອງ ພຣະຜູ້ເປັນເຈົ້າ ຈົ່ງເຮັດການແກ້ແຄ້ນນາງ ເຮັດກັບນາງເໝືອນທີ່ນາງໄດ້
ເຮັດມາແລ້ວ [16]ຈົ່ງຕັດຜູ້ຫວ່ານອອກຈາກ ບາບີໂລນ ແລະຕັດຜູ້ທີ່ຖືກ່ຽວໃນລະດູກ່ຽວ ເຫດ
ເພາະດາບຂອງຜູ້ບີບບັງຄັບທຸກຄົນຈຶ່ງຫັນເຂົ້າຫາຊົນຊາດຂອງຕົນ ແລະທຸກຄົນຈະໜີໄປຍັງ
ແຜ່ນດິນຂອງຕົນ [17]ອິສຣາເອນ ເປັນເໝືອນແກະທີ່ຖືກກະຈັດກະຈາຍໄປແລ້ວ ພວກໂຕສິງໄດ້
ລ່າພວກເຂົາໄປ ທຳອິດກະສັດ ອັດຊີເຣຍ ກິນເຂົາ ໃນທີ່ສຸດນີ້ ເນບູກາດເນັດຊາ ກະສັດແຫ່ງ
ບາບີໂລນ ໄດ້ຫັກກະດູກຂອງລາວ [18]ເພາະສະນັ້ນ ພຣະຜູ້ເປັນເຈົ້າຈອມໂຍທາ ພຣະເຈົ້າ ແຫ່ງ
ອິສຣາເອນ ກ່າວດັ່ງນີ້ວ່າ ເບິ່ງແມ ເຮົາຈະລົງໂທດກະສັດແຫ່ງ ບາບີໂລນ ແລະແຜ່ນດິນຂອງ
ລາວ ດັ່ງທີ່ເຮົາໄດ້ລົງໂທດກະສັດແຫ່ງ ອັດຊີເຣຍ [19]ເຮົາຈະໃຫ້ ອິສຣາເອນ ກັບສູ່ເດີ່ນຫຍ້າຂອງ
ຕົນ ພວກເຂົາຈະກິນຢູ່ເທິງ ກາເມນ ແລະໃນ ບາຊານ ແລະຈະອີ່ມໃຈເທິງໂນນພູ ເອຟຣາຢິມ
ແລະໃນ ກີເລອາດ [20]ພຣະຜູ້ເປັນເຈົ້າກ່າວວ່າ ໃນວັນເຫລົ່ານັ້ນ ແລະໃນເວລານັ້ນ ຈະຫາ
ຄວາມຊົ່ວຊ້າໃນ ອິສຣາເອນ ແຕ່ຈະຫາບໍ່ໄດ້ເລີຍ ຈະຫາບາບໃນ ຢູດາ ກໍຫາບໍ່ໄດ້ ເພາະເຮົາຈະ
ໃຫ້ອະໄພແກ່ຊົນເຫລົ່ານັ້ນຜູ້ທີ່ເຮົາຍັງເຫລືອໄວ້ໃຫ້ [21]ພຣະຜູ້ເປັນເຈົ້າກ່າວວ່າ ຈົ່ງຂຶ້ນໄປສູ້
ແຜ່ນດິນ ເມຣາທາຢິມ ແລະຕໍ່ສູ້ຊາວເມືອງ ເປໂກດ ຈົ່ງຂ້າພວກເຂົາ ແລະນຳທຳລາຍເສຍໃຫ້
ໝົດ ແລະຈົ່ງເຮັດທຸກຢ່າງຕາມທີ່ເຮົາໄດ້ບັນຊາເຈົ້າໄວ້ [22]ສຽງສົງຄາມຢູ່ໃນແຜ່ນດິນ ແລະສຽງ
ການທຳລາຍຢ່າງໃຫຍ່ຫລວງກໍຢູ່ໃນນັ້ນ [23]ຄ້ອນຕີຂອງແຜ່ນດິນໂລກທັງໝົດໄດ້ຖືກຕັດລົງແລະ
ຖືກຫັກເສຍແລ້ວນໍ ບາບີໂລນ ໄດ້ກາຍເປັນບ່ອນວ່າງເປົ່າທ່າມກາງບັນດາປະຊາຊາດແລ້ວນໍ
[24]ບາບີໂລນ ເອີຍ ເຮົາວາງບ້ວງແຮ້ວດັກເຈົ້າ ແລະເຈົ້າກໍຕິດບ້ວງແຮ້ວນັ້ນ ແລະເຈົ້າບໍ່ຮູ້ເລື່ອງ
ພວກເຂົາມາພົບເຈົ້າແລະຈັບເຈົ້າ ເພາະເຈົ້າໄດ້ຂັນສູ້ກັບ ພຣະຜູ້ເປັນເຈົ້າ [25]ພຣະຜູ້ເປັນເຈົ້າໄດ້

ຊົງ ເປີດ ຄັງ ອາວຸດ ຂອງ ພຣະອົງ ແລະ ຊົງ ໃຫ້ອາວຸດ ແຫ່ງ ພຣະພິໂລດ ຂອງ ພຣະອົງ ອອກ ມາ
ເພາະ ນີ້ ແຫລະ ເປັນ ພຣະລາຊະກິດ ແຫ່ງ ອົງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຈອມ ໂຍທາ ໃນ ແຜ່ນດິນ
ແຫ່ງຊາວ ບາບີໂລນ [26]ຈົ່ງມາຕໍ່ສູ້ກັບນາງຈາກທຸກບ່ອນໃນໂລກ ຈົ່ງເປີດບັນດາສາງຂອງນາງ
ຈົ່ງກອງນາງໄວ້ເໝືອນຢ່າງກອງເຂົ້າ ແລະທຳລາຍເສຍຈົນໝົດສິ້ນ ຢ່າໃຫ້ນາງເຫລືອຢູ່ເລີຍ
[27]ຈົ່ງຂ້າງົວເຖິກຂອງນາງໃຫ້ໝົດ ໃຫ້ມັນທັງຫລາຍລົງໄປຍັງການຂ້າ ວິບັດແກ່ມັນທັງຫລາຍ
ເພາະວັນເວລາຂອງມັນມາເຖິງແລ້ວ ຄືເວລາແຫ່ງການລົງໂທດ [28]ສຽງຂອງພວກເຂົາທີ່ໄດ້ໜີ
ແລະລອດພົ້ນຈາກແຜ່ນດິນ ບາບີໂລນ ໄປປະກາດການແກ້ແຄ້ນຂອງ ພຣະຜູ້ເປັນເຈົ້າ ພຣະເຈົ້າ
ຂອງເຮົາໃນ ຊີໂອນ ຄືການແກ້ແຄ້ນແທນພຣະວິຫານຂອງພຣະອົງ [29]ຈົ່ງເອີ້ນນັກທະນູມາຕໍ່ສູ້
ກັບ ບາບີໂລນ ຄືບັນດາຄົນທີ່ໂກ່ງທະນູ ຈົ່ງຕັ້ງຄ້າຍໄວ້ຮອບມັນ ຢ່າໃຫ້ຜູ້ໃດໜີລອດພົ້ນໄປໄດ້
ຈົ່ງເຮັດກັບນາງຕາມການກະທຳຂອງນາງ ຈົ່ງເຮັດແກ່ນາງເໝືອນທີ່ນາງໄດ້ເຮັດແລ້ວ ເພາະ
ນາງຈອງຫອງລອງດີກັບ ພຣະຜູ້ເປັນເຈົ້າ ພຣະອົງຜູ້ບໍລິສຸດແຫ່ງ ອິສຣາເອນ [30]ເພາະສະນັ້ນ
ຄົນໜຸ່ມຂອງນາງຈະລົ້ມລົງຕາມຖະໜົນ ແລະທະຫານຂອງນາງທັງໝົດຈະຖືກຕັດອອກໃນມື້ນັ້ນ
ພຣະຜູ້ເປັນເຈົ້າ ກ່າວດັ່ງນີ້ [31]ອົງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຈອມໂຍທາກ່າວວ່າ ຜູ້ຈອງຫອງເອີຍ
ເບິ່ງແມ ເຮົາຕໍ່ສູ້ກັບເຈົ້າ ເພາະວ່າວັນເວລາຂອງເຈົ້າມາເຖິງແລ້ວ ຄືເວລາທີ່ເຮົາຈະລົງໂທດເຈົ້າ
[32]ຜູ້ຈອງຫອງຈະສະດຸດ ແລະລົ້ມລົງ ຈະບໍ່ມີຜູ້ໃດຍົກລາວຂຶ້ນໄດ້ ແລະເຮົາຈະກໍ່ໄຟໃນບັນດາ
ຫົວເມືອງຂອງລາວ ແລະໄຟຈະກິນບັນດາທີ່ຢູ່ຮອບລາວເສຍ [33]ພຣະຜູ້ເປັນເຈົ້າ ຈອມໂຍທາ
ກ່າວດັ່ງນີ້ວ່າ ປະຊາຊົນ ອິສຣາເອນ ແລະປະຊາຊົນ ຢູດາ ຖືກບີບບັງຄັບນຳກັນ ບັນດາຜູ້ທີ່ຈັບ
ພວກເຂົາໄປເປັນຊະເລີຍໄດ້ຍຶດພວກເຂົາໄວ້ໝັ້ນ ທັງປະຕິເສດບໍ່ຍອມໃຫ້ພວກເຂົາໄປ [34]ພຣະ-
ຜູ້ໄຖ່ຂອງພວກເຂົານັ້ນເຂັ້ມແຂງ ພຣະນາມຂອງພຣະອົງຄື ພຣະຜູ້ເປັນເຈົ້າ ຈອມໂຍທາ ພຣະ-
ອົງຈະຊົງແກ້ຄະດີຂອງພວກເຂົາຢ່າງຖ້ວນຖີ່ ເພື່ອພຣະອົງຈະປະທານຄວາມສະຫງົບແກ່ແຜ່ນ-
ດິນ ແຕ່ຈະປະທານຄວາມບໍ່ສະຫງົບແກ່ຊາວເມືອງ ບາບີໂລນ [35]ພຣະຜູ້ເປັນເຈົ້າ ກ່າວວ່າ ໃຫ້
ດາບຢູ່ເໜືອຊາວ ບາບີໂລນ ແລະເໜືອຊາວເມືອງ ບາບີໂລນ ເໜືອເຈົ້ານາຍກັບນັກປາດຂອງ
ນາງ [36]ໃຫ້ດາບຢູ່ເໜືອຜູ້ຂີ້ຕົວະ ເພື່ອພວກເຂົາຈະກາຍເປັນຄົນໂງ່ ໃຫ້ດາບຢູ່ເໜືອບັນດານັກ-
ຮົບຂອງນາງ ເພື່ອພວກເຂົາຈະໂກດຮ້າຍ [37]ໃຫ້ດາບຢູ່ເໜືອມ້າທັງຫລາຍຂອງພວກເຂົາ ແລະ
ລົດຮົບຂອງພວກເຂົາ ໃຫ້ຢູ່ເໜືອຄົນຕ່າງດ້າວທ່າມກາງພວກເຂົາ ເພື່ອພວກເຂົາຈະກາຍເປັນຜູ້-
ຍິງໄປ ໃຫ້ດາບຢູ່ເໜືອຊັບສົມບັດທັງໝົດຂອງພວກເຂົາ ເພື່ອວ່າຊັບສົມບັດນັ້ນຈະຖືກປຸ້ນເສຍ
[38]ໃຫ້ຄວາມ ແຫ້ງແລ້ງ ຢູ່ ເໜືອ ນ້ຳທັງຫລາຍ ຂອງ ນາງ ເພື່ອ ນ້ຳທັງຫລາຍ ນັ້ນ ຈະ ໄດ້ ແຫ້ງ ໄປ
ເພາະເປັນແຜ່ນດິນແຫ່ງຮູບເຄົາລົບ ແລະພວກເຂົາທັງຫລາຍກໍບ້າຮູບນັ້ນ [39]ເພາະສະນັ້ນ ສັດ-
ປ່າທັງຫລາຍ ແລະບັນດາໝາຈິ້ງຈອກຈະອາໄສໃນ ບາບີໂລນ ແລະນົກເຄົ້າແມວຈະອາໄສຢູ່ໃນ
ນັ້ນ ເມືອງນັ້ນຈະບໍ່ມີປະຊາຊົນຢູ່ອີກຕໍ່ໄປເປັນນິດ ຄືບໍ່ມີຊາວເມືອງອາໄສຢູ່ຕະຫລອດຊົ່ວນິລັນ-
ດອນ [40]ພຣະຜູ້ເປັນເຈົ້າ ກ່າວວ່າ ເມື່ອ ພຣະເຈົ້າ ໄດ້ຊົງລົ້ມເມືອງ ໂຊໂດມ ເມືອງ ໂກໂມຣາ
ແລະຫົວເມືອງໃກ້ຄຽງ ດັ່ງນັ້ນຈະບໍ່ມີຄົນພັກອາໄສຢູ່ບ່ອນນັ້ນ ແລະບໍ່ມີບຸດຂອງມະນຸດຄົນໃດ
ອາໄສຢູ່ໃນເມືອງນັ້ນ [41]ເບິ່ງແມ ຊົນຊາດໜຶ່ງຈະມາຈາກທິດເໜືອ ປະຊາຊາດອັນເຂັ້ມແຂງ

ຊາດໜຶ່ງ ແລະກະສັດຫລາຍອົງຈະຖືກນຳໃຫ້ມາຈາກບ່ອນໄກທີ່ສຸດຂອງແຜ່ນດິນໂລກ 42ພວກ
ເຂົາຈະຈັບຄັນທະນູ ແລະຫອກ ພວກເຂົາໂຫດຮ້າຍ ແລະຈະບໍ່ມີຄວາມກະລຸນາ ສຽງຂອງ
ພວກເຂົາຈະເໝືອນສຽງທະເລຄະນອງ ພວກເຂົາຈະຂີ່ມ້າ ລຳລຽງກັນເຂົ້າສູ້ສົງຄາມກັບເຈົ້າ
ບຸດສາວແຫ່ງບາບີໂລນເອີຍ 43ກະສັດແຫ່ງບາບີໂລນໄດ້ຍິນຂ່າວເລື່ອງນັ້ນ ແລະພຣະຫັດຂອງ
ພຣະອົງກໍອ່ອນລົງ ຄວາມທຸກໃຈຈັບຫົວໃຈຕົນ ເຈັບປວດເໝືອນຜູ້ຍິງກຳລັງເກີດລູກ 44ເບິ່ງແມ
ສັດຕູຈະຂຶ້ນມາເໝືອນໂຕສິງຈາກດົງລຸ່ມແມ່ນ້ຳຢໍແດນ ໂດດເຂົ້າໃສ່ຄອກແກະທີ່ແຂງແຮງ ແຕ່
ເຮົາຈະເຮັດໃຫ້ພວກເຂົາໜີໄປຈາກນາງໂດຍໄວ ແລະໃຜເປັນຜູ້ທີ່ເລືອກສັນໄວ້ ທີ່ເຮົາຈະແຕ່ງ-
ຕັ້ງໄວ້ເໜືອນາງ ໃຜເປັນເໝືອນເຮົາບໍ ໃຜຈະນັດເຮົາບໍ ຜູ້ລ້ຽງແກະຄົນໃດຈະທົນຢືນຢູ່ຕໍ່ໜ້າ
ເຮົາໄດ້ 45ເພາະສະນັ້ນ ຈົ່ງຟັງແຜນການຊຶ່ງພຣະຜູ້ເປັນເຈົ້າຊົງວາງໄວ້ຕໍ່ສູ້ບາບີໂລນ ແລະ
ບັນດາພຣະປະສົງຊຶ່ງພຣະອົງໄດ້ດຳລິຂຶ້ນຕໍ່ສູ້ກັບແຜ່ນດິນຂອງຊາວບາບີໂລນ ແນ່ນອນ ໂຕ
ນ້ອຍທີ່ສຸດທີ່ຢູ່ໃນຝູງກໍຕ້ອງຖືກລາກເອົາໄປ ແນ່ນອນ ຄອກຂອງມັນນັ້ນຈະວ່າງເປົ່າ 46ແຜ່ນ-
ດິນໂລກສັ່ນສະເທືອນ ເພາະສຽງຂອງບາບີໂລນທີ່ຖືກຈັບເປັນຊະເລີຍ ແລະສຽງຮ້ອງຄາງດັງ
ໄປທ່າມກາງບັນດາປະຊາຊາດ"

# ບົດທີ 51

## ພຣະເຈົ້າຈະຊົງພິພາກສາກຸງບາບີໂລນ

1ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ "ເບິ່ງແມ ເຮົາຈະປຸກກະແສລົມແຫ່ງການທຳລາຍ ຕໍ່ສູ້ກັບ
ບາບີໂລນ ແລະຕໍ່ສູ້ກັບຄົນທີ່ອາໄສທ່າມກາງພວກທີ່ລຸກຂຶ້ນສູ້ກັບເຮົາ 2ເຮົາຈະສົ່ງຜູ້ຝັດໄປຍັງ
ບາບີໂລນ ແລະພວກເຂົາຈະຝັດນາງ ແລະຈະເຮັດໃຫ້ແຜ່ນດິນຂອງນາງວ່າງເປົ່າເສຍ ເມື່ອ
ພວກເຂົາມາອ້ອມນາງໄວ້ທຸກດ້ານ ໃນວັນແຫ່ງຄວາມຍາກລຳບາກ 3ຢ່າໃຫ້ນັກທະນູໂກ່ງຄັນ
ທະນູໄດ້ ຢ່າໃຫ້ເຂົາສວມເສື້ອເກາະລຸກຂຶ້ນໄດ້ ຢ່າໄວ້ຊີວິດຄົນໜຸ່ມຂອງນາງເລີຍ ຈົ່ງທຳລາຍ
ກອງທັບຂອງນາງທັງໝົດ 4ດັ່ງນັ້ນ ພວກເຂົາຈະຖືກຂ້າລົ້ມລົງໃນແຜ່ນດິນຂອງຊາວບາບີໂລນ
ແລະຈະຖືກແທງຊອດຢູ່ຖະໜົນໃນເມືອງນັ້ນ 5ເພາະວ່າອິສຣາເອນ ແລະຢູດາບໍ່ໄດ້ຖືກປະຖິ້ມ
ໂດຍພຣະເຈົ້າຂອງພວກເຂົາ ພຣະຜູ້ເປັນເຈົ້າຈອມໂຍທາ ເຖິງແມ່ນແຜ່ນດິນຂອງພວກເຂົາ
ເຕັມດ້ວຍຄວາມຜິດບາບຕໍ່ອົງບໍລິສຸດແຫ່ງອິສຣາເອນ 6ຈົ່ງໜີເສຍຈາກທ່າມກາງບາບີໂລນ ໃຫ້
ທຸກຄົນເອົາຊີວິດລອດສາ ໃນການລົງໂທດຄວາມຊົ່ວຊ້າຂອງນາງນັ້ນ ເຈົ້າຢ່າຖືກຕັດອອກເລີຍ
ເພາະນີ້ເປັນເວລາແກ້ແຄ້ນແຫ່ງພຣະຜູ້ເປັນເຈົ້າ ເປັນການຊຶ່ງພຣະອົງຊົງຕອບສະໜອງ 7ບາ-
ບີໂລນໄດ້ເຄີຍເປັນຖ້ວຍທອງຄຳໃນພຣະຫັດຂອງພຣະຜູ້ເປັນເຈົ້າ ເຮັດໃຫ້ແຜ່ນດິນໂລກທັງ
ໝົດມຶນເມົາ ບັນດາປະຊາຊາດໄດ້ດື່ມເຫລົ້າອະງຸ່ນຂອງນາງ ເພາະສະນັ້ນ ປະຊາຊາດຕ່າງ
ຕ່າງໆຈຶ່ງບ້າໄປ 8ບາບີໂລນໄດ້ລົ້ມລົງ ແລະແຕກໄປຢ່າງໄວວາ ຈົ່ງຮ້ອງຄາງເພື່ອນາງສາ ຈົ່ງ
ເອົາຫວ້ານຢາມາໃຫ້ນາງ ເພື່ອຊ່ວຍບັນເທົາທຸກ ແລະອາດຈະຮັກສານາງໃຫ້ຫາຍໄດ້ 9ເຮົາທັງ-
ຫລາຍຢາກຈະຮັກສາບາບີໂລນໃຫ້ຫາຍ ແຕ່ນາງບໍ່ຫາຍ ປະຖິ້ມນາງສາ ແລະໃຫ້ເຮົາໄປຍັງ
ປະເທດຂອງຕົນ ເພາະວ່າການພິພາກສານາງໄດ້ຂຶ້ນໄປເຖິງຟ້າສະຫວັນ ແລະໄດ້ຖືກຍົກຂຶ້ນ

ເຖິງຟາກຟ້າ 10ພຣະຜູ້ເປັນເຈົ້າຊົງນຳຄວາມຊອບທຳອອກມາໃຫ້ເຮົາ ມາແມ ໃຫ້ເຮົາປະກາດ
ພຣະລາຊະກິດຂອງພຣະຜູ້ເປັນເຈົ້າພຣະເຈົ້າຂອງເຮົາໃນຊີໂອນ 11ຈົ່ງຝົນລູກທະນູ ຈົ່ງຈັບເອົາ
ໂລ່ຂຶ້ນມາ ພຣະຜູ້ເປັນເຈົ້າຊົງເລົ້າໂລມໃຈບັນດາກະສັດຄົນເມເດຍ ເພາະວ່າພຣະປະສົງຂອງ
ພຣະອົງກ່ຽວກັບເລື່ອງບາບີໂລນ ກໍຄືການທຳລາຍມັນເສຍ ເພາະສະນັ້ນແຫລະ ເປັນການແກ້-
ແຄ້ນຂອງພຣະຜູ້ເປັນເຈົ້າ ຄືການແກ້ແຄ້ນແທນພຣະວິຫານຂອງພຣະອົງ 12ຈົ່ງປັກທຸງຕິດບັນ-
ດາກຳແພງຂອງບາບີໂລນ ຈົ່ງເຮັດຄົນເຝົ້າໃຫ້ເຂັ້ມແຂງ ຈົ່ງຕັ້ງຄົນຍາມຂຶ້ນ ຈົ່ງຕຽມກອງດັກ
ຊຸ່ມໄວ້ ເພາະພຣະຜູ້ເປັນເຈົ້າຊົງວາງແຜນການ ແລະທັງຊົງເຮັດສຳເລັດຕາມທີ່ພຣະອົງຊົງລັ່ນ
ພຣະຄຳກ່ຽວກັບຊາວເມືອງບາບີໂລນ 13ເຈົ້າຜູ້ອາໄສຕາມນ້ຳຍືດຍາວ ຜູ້ມີສົມບັດຫລວງຫລາຍ
ເອີຍ ອະວະສານຂອງເຈົ້າມາເຖິງແລ້ວ ເສັ້ນຄວາມໂລບຂອງເຈົ້າໄດ້ຖືກຕັດຂາດເສຍແລ້ວ
14ພຣະຜູ້ເປັນເຈົ້າຈອມໂຍທາໄດ້ຊົງປະຕິຍານພຣະອົງເອງວ່າ ແນ່ນອນ ເຮົາຈະໃຫ້ເຈົ້າມີຄົນ
ເຕັມເມືອງໃຫ້ຫລາຍເໝືອນຕັກແຕນ ແລະພວກເຂົາທັງຫລາຍຈະເປັ່ງສຽງໂຫ່ຮ້ອງມີໄຊເໜືອ
ເຈົ້າ 15ພຣະອົງຊົງສ້າງໂລກດ້ວຍລິດເດດຂອງພຣະອົງ ພຣະອົງຊົງສະຖາປະນາພິພົບໄວ້ດ້ວຍ
ພຣະສະຕິປັນຍາຂອງພຣະອົງ ແລະຊົງແຜ່ທ້ອງຟ້າອອກດ້ວຍຄວາມເຂົ້າໃຈຂອງພຣະອົງ
16ເມື່ອພຣະອົງຊົງເປັ່ງພຣະສຸລະສຽງກໍມີສຽງນ້ຳຄະນອງໃນທ້ອງຟ້າ ແລະຊົງເຮັດໃຫ້ໝອກຟູ
ຂຶ້ນຈາກປາຍໂລກ ຊົງເຮັດຟ້າແລບເພື່ອຝົນ ແລະຊົງນຳລົມມາຈາກພຣະຄັງຂອງພຣະອົງ
17ມະນຸດທຸກຄົນໂຫດຮ້າຍໃນທາງຄວາມຮູ້ຂອງຕົນ ຊ່າງທອງທຸກຄົນຈະໄດ້ອັບອາຍເພາະຮູບ
ເຄົາລົບຂອງຕົນ ເພາະຮູບເຄົາລົບໂລຫະຫລໍ່ຂອງຕົນເປັນຂອງບໍ່ຈິງ ແລະບໍ່ມີລົມຫາຍໃຈໃນຮູບ
ເຄົາລົບນັ້ນ 18ມັນເປັນຂອງບໍ່ມີຄ່າ ແລະເປັນຜົນງານແຫ່ງຄວາມຜິດພາດ ມັນຈະຕ້ອງຈິບຫາຍ
ເມື່ອເຖິງເວລາແຫ່ງການລົງໂທດ 19ພຣະອົງຜູ້ຊົງເປັນສ່ວນຂອງຢາໂຄບບໍ່ເໝືອນສິ່ງເຫລົ່ານີ້
ເພາະພຣະອົງຊົງເປັນຜູ້ທີ່ກໍ່ຮ່າງທຸກສິ່ງຂຶ້ນ ແລະອິສຣາເອນເປັນຕະກູນທີ່ເປັນມໍລະດົກຂອງ
ພຣະອົງ ພຣະຜູ້ເປັນເຈົ້າຈອມໂຍທາເປັນພຣະນາມຂອງພຣະອົງ 20ເຈົ້າເປັນຄ້ອນ ແລະຍຸດໂທ
ອຸປະກອນຂອງເຮົາ ເຮົາຈະຕີບັນດາປະຊາຊາດໃຫ້ມຸ່ນເປັນຊິ້ນໆດ້ວຍເຈົ້າ ເຮົາຈະທຳລາຍລາ-
ຊະອານາຈັກທັງຫລາຍດ້ວຍເຈົ້າ 21ເຮົາຈະຕີມ້າ ແລະຄົນຂີ່ເປັນຊິ້ນໆດ້ວຍເຈົ້າ ເຮົາຈະຕີບັນ-
ດາລົດຮົບ ແລະບັນດາຄົນໃຫ້ເປັນມຸ່ນທະລາຍໄປດ້ວຍເຈົ້າ 22ເຮົາຈະຕີຜູ້ຊາຍ ແລະຜູ້ຍິງເປັນ
ຊິ້ນໆດ້ວຍເຈົ້າ ເຮົາຈະຕີຄົນເຖົ້າ ແລະຄົນໜຸ່ມເປັນຊິ້ນໆດ້ວຍເຈົ້າ ເຮົາຈະຕີຄົນໜຸ່ມ ແລະຍິງ
ພົມມະຈາລີເປັນຊິ້ນໆດ້ວຍເຈົ້າ 23ເຮົາຈະຕີຜູ້ລ້ຽງແກະ ແລະຝູງແກະເປັນຊິ້ນໆດ້ວຍເຈົ້າ ເຮົາ
ຈະຕີຊາວນາ ແລະງົວຄູ່ແອກຂອງພວກເຂົາເປັນຊິ້ນໆດ້ວຍເຈົ້າ ເຮົາຈະຕີເຈົ້າເມືອງ ແລະຕັດ
ເປັນຊິ້ນໆດ້ວຍເຈົ້າ 24ພຣະຜູ້ເປັນເຈົ້າກ່າວວ່າ ເຮົາຈະສະໜອງບາບີໂລນ ແລະບັນດາຊາວ
ປະເທດບາບີໂລນທ່າມກາງສາຍຕາຂອງເຈົ້າ ຊຶ່ງບັນດາຄວາມຊົ່ວຮ້າຍທີ່ເຂົາໄດ້ເຮັດໃນຊີໂອນ
25ພຣະຜູ້ເປັນເຈົ້າກ່າວວ່າ ພູເຂົາຊຶ່ງທຳລາຍເອີຍ ເບິ່ງແມ ເຮົາຕໍ່ສູ້ເຈົ້າ ເຈົ້າຜູ້ທຳລາຍແຜ່ນດິນ
ໂລກທັງໝົດ ເຮົາຈະຢຽດມືຂອງເຮົາອອກຕໍ່ສູ້ເຈົ້າ ແລະກິ້ງເຈົ້າລົງມາຈາກໜ້າຜາ ແລະຈະເຮັດ
ໃຫ້ເຈົ້າເປັນພູເຂົາທີ່ຖືກໄໝ້ 26ພວກເຂົາຈະບໍ່ເອົາຫີນຈາກເຈົ້າໄປເຮັດສີລາຫົວມຸມ ແລະບໍ່ເອົາ
ຫີນໄປເຮັດຮາກຖານ ແຕ່ເຈົ້າຈະເປັນຂອງຖິ້ມຮ້າງເປັນນິດ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ 27ຈົ່ງຕັ້ງ

ທຸງໄວ້ເທິງແຜ່ນດິນ ຈົ່ງເປົ່າເຂົາສັດທ່າມກາງປະຊາຊາດທັງຫລາຍ ຈົ່ງຕຽມປະຊາຊາດທັງ-
ຫລາຍໄວ້ເຮັດສົງຄາມກັບນາງ ຈົ່ງເອີ້ນລາຊະອານາຈັກຕໍ່ໄປນີ້ມາສູ້ກັບນາງ ອາຣາຣັດ ມິນນີ
ແລະອັດຊະເກນາດ ຈົ່ງຕັ້ງຈອມທັບໄວ້ຕໍ່ສູ້ນາງ ຈົ່ງນຳຝູງມ້າຂຶ້ນມາໃຫ້ຫລາຍເໝືອນດັ່ງຝູງ
ຕັກແຕນ [28]ຈົ່ງຕຽມບັນດາປະຊາຊາດມາເຮັດສົງຄາມກັບນາງ ຄືຕຽມບັນດາກະສັດແຫ່ງເມເດຍ
ພ້ອມທັງເຈົ້າເມືອງ ແລະຜູ້ປົກຄອງທັງຫລາຍ ແລະທົ່ວທຸກແຜ່ນດິນທີ່ຂຶ້ນແກ່ເມເດຍ [29]ແຜ່ນ-
ດິນນັ້ນຈະສະທ້ານສະເທືອນ ແລະໂສກເສົ້າ ເພາະບັນດາພຣະປະສົງຂອງພຣະຜູ້ເປັນເຈົ້າຕໍ່
ບາບີໂລນຈະຕັ້ງໝັ້ນຢູ່ ເພື່ອຈະເຮັດໃຫ້ແຜ່ນດິນບາບີໂລນເປັນທີ່ຮົກຮ້າງເສຍປາດສະຈາກຄົນ
ອາໄສ [30]ນັກຮົບແຫ່ງບາບີໂລນຢຸດຮົບແລ້ວ ພວກເຂົາຄ້າງຢູ່ໃນທີ່ກຳບັງອັນເຂັ້ມແຂງຂອງຕົນ
ກຳລັງຂອງພວກເຂົາຫົດຖອຍເສຍແລ້ວ ພວກເຂົາກາຍເປັນເໝືອນຜູ້ຍິງ ບ່ອນອາໄສຂອງນາງ
ກໍໄຟໄໝ້ແລ້ວ ແລະປະຕູຂອງນາງກໍຫັກ [31]ນັກແລ່ນຄົນໜຶ່ງແລ່ນໄປພົບນັກແລ່ນອີກຄົນໜຶ່ງ ຜູ້
ສົ່ງຂ່າວຄົນໜຶ່ງແລ່ນໄປພົບຜູ້ສົ່ງຂ່າວອີກຄົນໜຶ່ງ ເພື່ອທູນກະສັດແຫ່ງບາບີໂລນວ່າ ເມືອງຂອງ
ພະອົງຖືກຍຶດໄວ້ທຸກດ້ານແລ້ວ [32]ທ່າລຸຍຂ້າມກໍຖືກຍຶດແລ້ວ ບ່ອນເປັນບຶງເປັນໜອງກໍຖືກໄຟ
ໄໝ້ ແລະບັນດາທະຫານກໍຕົກໃຈຢ້ານ [33]ເພາະພຣະຜູ້ເປັນເຈົ້າຈອມໂຍທາ ພຣະເຈົ້າແຫ່ງອິ-
ສຣາເອນ ກ່າວດັ່ງນີ້ວ່າ ບຸດສາວແຫ່ງບາບີໂລນກໍເໝືອນລານນວດເຂົ້າ ເວລາທີ່ນາງຖືກຢຽບ
ຢ່ຳ ອີກຈັກໜ້ອຍ ເວລາກ່ຽວກໍຈະມາເຖິງແລ້ວ” [34]ໃຫ້ຊາວເມືອງຊີໂອນເວົ້າວ່າ “ເນບູກາດ-
ເນັດຊາ ກະສັດແຫ່ງບາບີໂລນໄດ້ກິນຂ້າພະເຈົ້າເສຍແລ້ວ ເພິ່ນໄດ້ຢຽບຂ້າພະເຈົ້າ ໄດ້ເຮັດໃຫ້
ຂ້າພະເຈົ້າເປັນພາຊະນະວ່າງເປົ່າ ໄດ້ກືນຂ້າພະເຈົ້າເໝືອນດັ່ງມັງກອນ ເພິ່ນກິນຂອງແຊບຂອງ
ຂ້າພະເຈົ້າຈົນເຕັມທ້ອງ ແລະໄດ້ໄລ່ຂ້າພະເຈົ້າອອກໄປ [35]ຄວາມທາລຸນທີ່ໄດ້ເຮັດແກ່ຂ້າພະເຈົ້າ
ແລະແກ່ເນື້ອໜັງຂອງຂ້າພະເຈົ້າ ຈົ່ງຕົກເໜືອບາບີໂລນ” ໃຫ້ເຢຣູຊາເລັມກ່າວວ່າ “ໃຫ້ຄວາມ
ຮັບຜິດຊອບສຳລັບເລືອດຕົກຂອງເຮົາຢູ່ແກ່ຊາວປະເທດບາບີໂລນ” [36]ເພາະສະນັ້ນ ພຣະຜູ້-
ເປັນເຈົ້າກ່າວດັ່ງນີ້ວ່າ “ເບິ່ງແມ ເຮົາຈະແກ້ຄະດີຂອງເຈົ້າ ແລະເຮັດການແກ້ແຄ້ນເພື່ອເຈົ້າ
ເຮົາຈະເຮັດໃຫ້ທະເລຂອງນາງແຫ້ງ ແລະເຮັດໃຫ້ແຫລ່ງນ້ຳຂອງນາງເຫືອດຫາຍ [37]ແລະບາບີ-
ໂລນຈະກາຍເປັນສິ່ງຫັກພັງ ເປັນບ່ອນໝາປ່າຢູ່ ເປັນຄວາມປະຫລາດໃຈ ແລະເປັນທີ່ເຍາະ-
ເຍີ້ຍ ປາດສະຈາກຜູ້ຄົນອາໄສ [38]ພວກເຂົາຈະຄຳລາມນຳກັນເໝືອນໂຕສິງ ພວກເຂົາຈະຄຳ
ລາມເໝືອນລູກໂຕສິງ [39]ຂະນະທີ່ພວກເຂົາທັງຫລາຍເຜັດຮ້ອນ ເຮົາຈະຕຽມງານລ້ຽງໃຫ້ ແລະ
ເຮັດໃຫ້ພວກເຂົາມຶນເມົາ ເພື່ອພວກເຂົາຈະຍິນດີ ຈົນນອນຫລັບຢູ່ເປັນນິດ ບໍ່ຕື່ນເລີຍ ພຣະຜູ້-
ເປັນເຈົ້າກ່າວດັ່ງນີ້ແຫລະ [40]ເຮົາຈະນຳພວກເຂົາທັງຫລາຍລົງມາດັ່ງລູກແກະໄປຍັງການຂ້າ
ເໝືອນແກະຜູ້ ແລະແບ້ຜູ້ [41]ເມືອງຖືກຍຶດແລ້ວນໍ ຊຶ່ງເປັນທີ່ສັນລະເສີນຂອງທົ່ວແຜ່ນດິນໂລກ
ຖືກຈັບແລ້ວບໍ ບາບີໂລນໄດ້ກາຍເປັນຄວາມປະຫລາດໃຈທ່າມກາງບັນດາປະຊາຊາດແລ້ວນໍ
[42]ທະເລຂຶ້ນມາເໜືອບາບີໂລນ ຄື້ນຢ່າງຫລວງຫລາຍຄຸມນາງໄວ້ [43]ທົ່ວເມືອງຂອງນາງກາຍ-
ເປັນບ່ອນວ່າງເປົ່າ ເປັນແຜ່ນດິນທີ່ແຫ້ງແລ້ງ ແລະເປັນຖິ່ນແຫ້ງແລ້ງກັນດານ ເປັນແຜ່ນດິນທີ່
ບໍ່ມີຜູ້ໃດອາໄສຢູ່ ແລະບໍ່ມີບຸດຂອງມະນຸດຄົນໃດຂ້າມໄປ [44]ແລະເຮົາຈະລົງໂທດພະເບນໃນ
ບາບີໂລນ ມັນກືນຫຍັງເຂົ້າໄປແລ້ວ ເຮົາຈະເອົາອອກຈາກປາກມັນເສຍ ບັນດາປະຊາຊາດຈະ

ບໍ່ໄຫລໄປຫາມັນອີກ ເອີ ກຳແພງແຫ່ງບາບີໂລນຈະລົ້ມລົງ [45]ປະຊາຊົນຂອງເຮົາເອີຍ ຈົ່ງ
ອອກໄປເສຍຈາກທ່າມກາງນາງ ໃຫ້ທຸກຄົນເອົາຊີວິດຂອງຕົນລອດພົ້ນຈາກຄວາມພິໂລດອັນ
ຮ້ອນແຮງຂອງພຣະຜູ້ເປັນເຈົ້າ [46]ຢ່າໃຫ້ໃຈຂອງເຈົ້າອ່ອນແອໄປ ແລະຢ່າໃຫ້ຢ້ານຕໍ່ຂ່າວຊຶ່ງໄດ້
ຍິນໃນແຜ່ນດິນນັ້ນ ຈະມີຂ່າວມາໃນປີໜຶ່ງ ຕໍ່ມາອີກປີໜຶ່ງກໍຈະມີຂ່າວມາ ແລະຄວາມທາລຸນກໍມີ
ຢູ່ໃນແຜ່ນດິນ ແລະຜູ້ຄອບຄອງກໍຕໍ່ສູ້ກັບຜູ້ຄອບຄອງ [47]ເພາະສະນັ້ນ ເບິ່ງແມ ວັນເວລາຈະມາ
ເຖິງ ເມື່ອເຮົາຈະລົງໂທດຮູບເຄົາລົບແຫ່ງບາບີໂລນ ແຜ່ນດິນທັງໝົດຂອງນາງຈະຕ້ອງໄດ້ອັບ-
ອາຍ ແລະບັນດາຊາວບາບີໂລນ ຊຶ່ງຖືກຂ້າຈະລົ້ມລົງຢູ່ທ່າມກາງນາງ [48]ແລ້ວຟ້າສະຫວັນ
ແຜ່ນດິນໂລກ ແລະສັບພະສິ່ງທີ່ມີຢູ່ໃນນັ້ນ ຈະຮ້ອງເພງເໜືອບາບີໂລນ ເພາະວ່າຜູ້ທຳລາຍຈະ
ມາຈາກທິດເໜືອຕໍ່ສູ້ກັບນາງ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ [49]ບາບີໂລນເຮັດໃຫ້ຄົນອິສຣາເອນທີ່
ຖືກຂ້າລົ້ມລົງສັນໃດ ຄົນທີ່ຖືກຂ້າແຫ່ງແຜ່ນດິນໂລກທັງປວງຈະຕ້ອງລົ້ມລົງທີ່ບາບີໂລນສັນນັ້ນ
[50]ເຈົ້າທັງຫລາຍຜູ້ທີ່ລອດພົ້ນໄປຈາກດາບ ຈົ່ງໄປສາ ຢ່າຢືນຢູ່ລ້າໆ ຈົ່ງລະນຶກເຖິງພຣະຜູ້-
ເປັນເຈົ້າຈາກທີ່ໄກ ແລະໃຫ້ກຸງເຢຣູຊາເລັມເຂົ້າມາໃນຈິດໃຈຂອງເຈົ້າ [51]ເຮົາໄດ້ອັບອາຍ
ເພາະເຮົາໄດ້ຍິນຄຳເຍາະເຍີ້ຍ ຄວາມອັບອາຍຄຸມໜ້າເຮົາໄວ້ ເພາະຄົນຕ່າງຊາດໄດ້ເຂົ້າໃນສະ-
ຖານທີ່ບໍລິສຸດແຫ່ງພຣະນິເວດຂອງພຣະຜູ້ເປັນເຈົ້າ” [52]ພຣະຜູ້ເປັນເຈົ້າກ່າວວ່າ “ເພາະສະນັ້ນ
ເບິ່ງແມ ວັນເວລາຈະມາເຖິງ ເມື່ອເຮົາຈະລົງໂທດຮູບເຄົາລົບຂອງນາງ ແລະຄົນທີ່ບາດເຈັບຈະ
ຮ້ອງຄາງຢູ່ທົ່ວແຜ່ນດິນທັງໝົດຂອງນາງ [53]ພຣະຜູ້ເປັນເຈົ້າກ່າວວ່າ ເຖິງແມ່ນບາບີໂລນຈະ
ຂຶ້ນໄປເທິງສະຫວັນ ແລະເຖິງແມ່ນນາງຈະສ້າງປ້ອມປ້ອງກັນທີ່ສູງອັນເຂັ້ມແຂງຂອງນາງໄວ້
ບັນດາຜູ້ທຳລາຍກໍຈະຍັງມາຈາກເຮົາເໜືອນາງ [54]ມີສຽງຮ້ອງມາຈາກບາບີໂລນ ແລະສຽງການ
ທຳລາຍຢ່າງໃຫຍ່ຫລວງຈາກແຜ່ນດິນຂອງຄົນບາບີໂລນ [55]ເພາະພຣະຜູ້ເປັນເຈົ້າໄດ້ຊົງເຮັດ
ໃຫ້ບາບີໂລນເປັນທີ່ຖິ້ມຮ້າງ ແລະເຮັດໃຫ້ສຽງທີ່ໃຫຍ່ໂຕຂອງນາງງຽບ ເມື່ອຄື້ນຂອງນາງຄະ-
ນອງເໝືອນນ້ຳຫລາຍ ສຽງອຶກກະທຶກຂອງພວກເຂົາກໍເປັ່ງອອກມາ [56]ເພາະວ່າຜູ້ທຳລາຍໄດ້ມາ
ເໜືອນາງ ມາເໜືອບາບີໂລນ ບັນດານັກຮົບຂອງນາງຖືກຍຶດແລ້ວ ຄັນທະນູຂອງພວກເຂົາຖືກ
ຫັກເປັນທ່ອນໆ ເພາະພຣະຜູ້ເປັນເຈົ້າຊົງເປັນພຣະເຈົ້າແຫ່ງການຕອບແທນ ພຣະອົງຈະຕອບ
ສະໜອງແນ່ນອນ [57]ເຮົາຈະເຮັດໃຫ້ເຈົ້ານາຍຂອງນາງ ແລະນັກປາດຂອງນາງ ເຈົ້າເມືອງຂອງ
ນາງ ຜູ້ບັງຄັບບັນຊາຂອງນາງ ແລະນັກຮົບຂອງນາງມຶນເມົາ ພວກເຂົາຈະນອນຫລັບຢູ່ເປັນ-
ນິດ ບໍ່ຕື່ນອີກເລີຍ ພຣະມະຫາກະສັດຜູ້ຊົງພຣະນາມວ່າພຣະຜູ້ເປັນເຈົ້າຈອມໂຍທາ ກ່າວດັ່ງນີ້
[58]ພຣະຜູ້ເປັນເຈົ້າຈອມໂຍທາກ່າວດັ່ງນີ້ວ່າ ກຳແພງອັນກວ້າງຂວາງຂອງບາບີໂລນຈະຖືກປາບ
ລົງໃຫ້ລຽບສະເໝີພື້ນດິນ ແລະປະຕູເມືອງສູງຂອງນາງຈະຖືກເຜົາດ້ວຍໄຟ ບັນດາປະຊາຊົນຈະ
ເຮັດວຽກຢ່າງບໍ່ມີຜົນ ແລະຊົນຊາດທັງຫລາຍຈະອິດເມື່ອຍ ກໍເພື່ອເຜົາໄຟເສຍເທົ່ານັ້ນ”

[59]ຖ້ອຍຄຳຊຶ່ງເຢເຣມີຢາຜູ້ປະກາດພຣະທຳໄດ້ບັນຊາແກ່ເສຣາຢາລູກຊາຍເນຣີຢາ ຜູ້ເປັນ
ລູກຊາຍມາເຊຢາ ເມື່ອລາວໄປຍັງບາບີໂລນກັບເຊເດກີຢາກະສັດແຫ່ງຢູດາ ໃນປີທີສີ່ແຫ່ງ
ລາຊະການຂອງເພິ່ນນັ້ນ ເສຣາຢາເປັນຫົວໜ້າຈັດທີ່ພັກ [60]ເຢເຣມີຢາໄດ້ຂຽນບັນດາຄວາມ
ຮ້າຍທັງໝົດຊຶ່ງຈະມາເຖິງບາບີໂລນນັ້ນໄວ້ໃນໜັງສື ບັນດາຖ້ອຍຄຳເຫລົ່ານີ້ເປັນຄຳທີ່ຂຽນໄວ້

ກ່ຽວກັບເລື່ອງ ບາບີໂລນ [61]ແລະ ເຢເຣມີຢາ ເວົ້າກັບ ເສຣາຢາ ວ່າ “ເມື່ອທ່ານມາເຖິງ ບາບີໂລນ
ແລ້ວ ທ່ານຈະເຫັນ ແລະທ່ານຈົ່ງອ່ານຖ້ອຍຄຳເຫລົ່ານີ້ທັງໝົດໃຫ້ພວກເຂົາຟັງ” [62]ແລະຈົ່ງ
ກ່າວວ່າ ‘ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງໄດ້ກ່າວກັບສະຖານທີ່ນີ້ວ່າ ພຣະອົງຈະຊົງຕັດອອກ
ເສຍ ເພື່ອວ່າຈະບໍ່ມີຫຍັງອາໄສຢູ່ໃນນັ້ນ ບໍ່ວ່າມະນຸດ ຫລືສັດ ແຕ່ຈະເປັນທີ່ຮົກຮ້າງເປັນນິດ’
[63]ຕໍ່ມາເມື່ອທ່ານອ່ານໜັງສືນີ້ຈົບແລ້ວ ຈົ່ງເອົາຫີນກ້ອນໜຶ່ງມັດຕິດມັນໄວ້ ແລະໂຍນມັນຖິ້ມໄປ
ໃນກາງແມ່ນ້ຳເອຟຣາດ [64]ແລະຈົ່ງກ່າວວ່າ ‘ບາບີໂລນຈະຈົມລົງຢ່າງນີ້ແຫລະ ຈະບໍ່ຟູຂຶ້ນອີກ
ເລີຍເນື່ອງດ້ວຍຄວາມຮ້າຍຊຶ່ງເຮົາຈະນຳມາເໜືອນາງ ແລະພວກເຂົາຈະອິດເມື່ອຍ’” ຖ້ອຍຄຳ
ຂອງ ເຢເຣມີຢາ ມີພຽງເທົ່ານີ້

# ບົດທີ 52

## ເຊເດກີຢາຖືກຄຸກຈົນຕາຍ

[1]ເຊເດກີຢາ ໄດ້ເປັນກະສັດເມື່ອອາຍຸຊາວເອັດພັນສາ ຊົງປົກຄອງຢູ່ທີ່ນະຄອນ ເຢຣູຊາເລັມ
ເປັນເວລາສິບເອັດພັນສາ ພະມານດາຂອງພະອົງຊື່ ຮາມຸຕານ ຊຶ່ງເປັນລູກສາວຂອງ ເຢເຣມີ-
ຢາ ຊາວເມືອງ ລິບນາ. [2]ໃນສາຍພຣະເນດຂອງ ພຣະຜູ້ເປັນເຈົ້ານັ້ນ ຊົງເຫັນວ່າກະສັດ ເຊເດກີ-
ຢາ ໄດ້ຊົງເຮັດຊົ່ວຮ້າຍຫລາຍ ເຊັ່ນດຽວກັນກັບກະສັດ ເຢໂຮຢາກິມ ໄດ້ເຮັດ.

[3]ສະນັ້ນ ສະພາບຂອງສັງຄົມໃນນະຄອນ ເຢຣູຊາເລັມ ແລະໃນ ຢູດາ ຈຶ່ງຊົ່ວຮ້າຍຫລາຍຈົນ
ພຣະຜູ້ເປັນເຈົ້າ ຊົງພຣະພິໂລດ ແລະປະຖິ້ມຊາວ ເມືອງນີ້. [4]ກະສັດ ເຊເດກີຢາ ໄດ້ກະບົດຕໍ່ສູ້
ກະສັດ ບາບີໂລນ ຕໍ່ມາ ໃນວັນທີສິບເດືອນສິບຂອງປີທີເກົ້າ ແຫ່ງລາຊະການ ເຊເດກີຢາ ກະສັດ
ຢູດາ ເນບູກາດເນັດຊາ ກະສັດແຫ່ງ ບາບີໂລນ ໄດ້ຍົກທັບມາອ້ອມນະຄອນ ເຢຣູຊາເລັມ ໄດ້
ຕັ້ງຄ້າຍໄວ້ນອກເມືອງ ແລະສ້າງກຳແພງອ້ອມເມືອງ. [5]ນະຄອນ ເຢຣູຊາເລັມ ຈຶ່ງຖືກປິດລ້ອມ
ຈົນ ເຖິງປີທີສິບ ເອັດ ແຫ່ງລາຊະການ ເຊເດກີຢາ. [6]ເມື່ອວັນທີເກົ້າເດືອນສິບປີດຽວກັນນັ້ນ ໄດ້
ເກີດການອຶດຢາກຂຶ້ນຢ່າງຮ້າຍແຮງຈົນປະຊາຊົນບໍ່ມີຫຍັງຈະກິນ. [7]ແລ້ວພວກສັດຕູໄດ້ມ້າງເພ
ກຳແພງເມືອງບ່ອນໜຶ່ງອອກ ທະຫານທັງໝົດທີ່ຢູ່ໃນ ເມືອງຈຶ່ງພາກັນໜີ ພວກເຂົາໄດ້ປົບໜີ
ອອກໄປທາງສວນອຸດທະຍານໃນເວລາກາງຄືນ ໄປຕາມທາງປະຕູເມືອງລະຫວ່າງກຳແພງທັງ
ສອງ ໂດຍມຸ່ງໜ້າໄປທາງຮ່ອມພູຢໍແດນ ຍ້ອນວ່າຊາວ ບາບີໂລນ ໄດ້ປິດລ້ອມເມືອງຢູ່. [8]ແຕ່
ກອງທັບ ບາບີໂລນ ໄດ້ໄລ່ຈັບ ເຊເດກີຢາ ໄດ້ທີ່ທົ່ງພຽງໃກ້ເມືອງ ເຢຣີໂກ ທະຫານທັງໝົດຂອງ
ພຣະອົງໄດ້ໜີປະພະອົງໄປ ຫລັງຈາກຈັບ ເຊເດກີຢາ ໄດ້ແລ້ວ. [9]ພວກເຂົາກໍນຳພະອົງມາມອບ
ໃຫ້ກະສັດ ເນບູກາດເນັດຊາ ຊຶ່ງຊົງປະທັບຢູ່ເມືອງ ຣິບລາ ໃນດິນແດນຮາມາດ ແລະຊົງຕັດສິນ
ລົງໂທດກະສັດ ເຊເດກີຢາ ຢູ່ທີ່ນັ້ນ. [10]ກະສັດ ບາບີໂລນ ໄດ້ຕັດສິນປະຫານຊີວິດພວກລູກຊາຍ
ຂອງ ເຊເດກີຢາ ຢູ່ທີ່ເມືອງ ຣິບລາຕໍ່ໜ້າຕໍ່ຕາ ເຊເດກີຢາ ເອງ ແລະໄດ້ຕັດສິນປະຫານຊີວິດພວກ
ເຈົ້ານາຍຂອງ ຢູດາດ້ວຍ. [11]ຕໍ່ມາ ພຣະອົງໄດ້ຄວັດໜ່ວຍຕາຂອງ ເຊເດກີຢາອອກ ແລະໄດ້ຜູກ
ໂສ້ນຳໄປຍັງ ບາບີໂລນ ແລ້ວຂັງໄວ້ໃນຄຸກຈົນຮອດມື້ຕາຍ.

## ການທຳລາຍພຣະວິຫານ

12ວັນທີສິບເດືອນຫ້າ ຊຶ່ງເປັນປີທີສິບເກົ້າແຫ່ງລາຊະການ ເນບູກາດເນັດຊາກະສັດ ບາບີໂລນ
ເນບູຊາຣາດານຜູ້ເປັນລາຊະເລຂາ ແລະຜູ້ບັນຊາການທະຫານ. 13ໄດ້ເຂົ້າໄປນະຄອນ ເຢຣູຊາ-
ເລັມ ແລ້ວໄດ້ເຜົາພຣະວິຫານ ເຜົາພະລາຊະວັງ ແລະບ້ານເຮືອນຂອງບຸກຄົນສຳຄັນຖິ້ມ.
14ສ່ວນຝ່າຍທະຫານຂອງເພິ່ນກໍທຳລາຍກຳແພງເມືອງ. 15ຕໍ່ມາ ເນບູຊາຣາດານໄດ້ຈັບປະຊາ-
ຊົນທີ່ເຫລືອຢູ່ໃນເມືອງ ລວມທັງຄົນທີ່ໜີເຂົ້າມາມອບຕົວຕໍ່ເພິ່ນ ກັບພວກນາຍຊ່າງທີ່ເຫລືອຢູ່ໄປ
ເປັນຊະເລີຍທີ່ ບາບີໂລນ. 16ເນບູຊາຣາດານໄດ້ປະຄົນທຸກຍາກບາງຄົນທີ່ບໍ່ມີໄຮ່ນາໄວ້ໃນປະ-
ເທດຢູດາ ແລະໄດ້ໃຫ້ພວກເຂົາເຂົ້າທຳງານໃນສວນອະງຸ່ນ ແລະເຮັດໄຮ່ໄຖນາ.

17ຊາວບາບີໂລນໄດ້ທັບເສົາກັບຕີນເສົາ ແລະຂັນທອງສຳລິດໃນພຣະວິຫານຫັກເປັນທ່ອນໆ
ແລ້ວຂົນເອົາທອງສຳລິດທັງໝົດໄປຍັງ ບາບີໂລນ. 18ພວກເຂົາຍັງໄດ້ຂົນເອົາເຄື່ອງໃຊ້ສຳລັບທຳ
ຄວາມສະອາດແທ່ນບູຊາ ຄືສຽມ ຊວ້ານ ຄຸໃສ່ຂີ້ເທົ່າໄຟ ຖາດແລະມີດຕັດໄສ້ຕະກຽງ ໂອໃສ່
ເລືອດເວລາຂ້າສັດຖວາຍບູຊາ ໝໍ້ສຳລັບເຄື່ອງຫອມບູຊາ ແລະເຄື່ອງທອງສຳລິດທັງໝົດທີ່ໃຊ້
ໃນພິທີການຂອງພຣະວິຫານ. 19ພວກເຂົາໄດ້ຂົນເອົາທຸກສິ່ງທີ່ເຮັດດ້ວຍຄຳ ຫລືເງິນໄປ ຄື ໝໍ້
ນ້ອຍ ອ່າງໃສ່ຖ່ານຫີນ ໂອໃສ່ເລືອດ ຄຸໃສ່ຂີ້ເທົ່າໄຟ ຕີນຕະກຽງ ຖາດເຄື່ອງຫອມບູຊາ ຈອກ
ເຄື່ອງດື່ມບູຊາ ເຄື່ອງທອງສຳລິດທີ່ກະສັດ ໂຊໂລໂມນເຮັດໄວ້ໃນພຣະວິຫານ. 20ຄືເສົາສອງເສົາ
ຕີນເສົາ ອ່າງໃຫຍ່ໃສ່ນໍ້າ ຮູບງົວສິບສອງໂຕທີ່ຮອງຮັບອ່າງໃຫຍ່ນັ້ນ ເຄື່ອງເຫລົ່ານີ້ໜັກຫລາຍ
ຈົນຊັ່ງບໍ່ໄດ້. 21-22ເສົາສອງເສົານັ້ນ ແຕ່ລະເສົາແທກໄດ້ດັ່ງນີ້: ລວງສູງສິບແປດສອກ ລວງ
ອ້ອມສິບສອງສອກ ຂ້າງໃນເປັນໂກນ ຄວາມໜາຂອງເສົາສີ່ນິ້ວ ຢູ່ເທິງຫົວເສົາມີບົວທອງສຳ-
ລິດ ບົວແຕ່ລະດອກສູງຫ້າສອກ ມີຮູບພວງມາໄລແລະຮູບໝາກພິລາລ້ອມຮອບບົວນັ້ນ ສິ່ງທັງ
ໝົດນີ້ເຮັດດ້ວຍທອງສຳລິດ. 23ເທິງພວງມາໄລໂດຍຮອບມີຮູບໝາກພິລາຮ້ອຍໜ່ວຍ ແຕ່ຫລຽວ
ຂຶ້ນໄປຈາກເບື້ອງລຸ່ມເຫັນມີເກົ້າສິບຫົກໜ່ວຍ.

## ຄົນຢູດາຖືກກວາດຕ້ອນໄປບາບີໂລນ

24ນອກຈາກນັ້ນ ເນບູຊາຣາດານຜູ້ບັນຊາການທະຫານ ຍັງໄດ້ຈັບ ເສຣາຢາມະຫາປະໂລຫິດ
ເຊຟານີຢາ ຜູ້ຮອງມະຫາປະໂລຫິດ ແລະຄົນສຳຄັນອື່ນໆ ອີກທີ່ຮັບໃຊ້ຢູ່ໃນວິຫານ ສາມຄົນ
ໄປເປັນຊະເລີຍ. 25ເພິ່ນໄດ້ຈັບເອົາຜູ້ບັນຊາການທະຫານຄົນໜຶ່ງ ທີ່ປຶກສາມະຫາກະສັດເຈັດຄົນ
ຮອງຜູ້ບັນຊາການທະຫານຊຶ່ງຮັບໜ້າທີ່ເກນທະຫານ ແລະຄົນສຳຄັນອື່ນໆ ອີກຫົກສິບຄົນໄປ
ຈາກເມືອງນັ້ນ. 26ເນບູຊາຣາດານໄດ້ຈັບຄົນເຫລົ່ານີ້ນຳໄປມອບໃຫ້ກະສັດ ບາບີໂລນທີ່ເມືອງ
ຣິບລາ. 27ກະສັດບາບີໂລນໄດ້ຊົງຕີ ແລະລົງໂທດພວກເຂົາຈົນຕາຍຢູ່ເມືອງຣິບລາ ດິນແດນ
ຮາມາດ.

28ຕໍ່ໄປນີ້ ແມ່ນຈຳນວນປະຊາຊົນຢູດາທີ່ຖືກກະສັດ ເນບູກາດເນັດຊາກວາດຕ້ອນອອກຈາກ
ປະເທດໄປເປັນຊະເລີຍ ຄືໃນລາຊະການປີທີເຈັດ. 29ກວາດຕ້ອນໄປ 3,023 ຄົນ ໃນປີທີສິບ
ແປດກວາດຕ້ອນໄປຈາກນະຄອນ ເຢຣູຊາເລັມ 832 ຄົນ. 30ໃນປີທີຊາວສາມ ເນບູຊາຣາດານ
ກວາດຕ້ອນໄປ 745 ຄົນ ລວມທັງຄົນທີ່ຖືກຈັບໄປທັງໝົດມີ 4.600 ຄົນ.

[31]ໃນປີທຳອິດທີ່ ເອວີນ-ເມໂຣດັກ ເປັນກະສັດ ພະອົງໄດ້ຊົງມີເມດຕາຕໍ່ ເຢໂຮຢາກິນ ກະສັດ
ຢູດາ ຄື ໄດ້ຊົງໂຜດເອົາພະອົງອອກຈາກຄຸກ ຊຶ່ງໄດ້ຢູ່ໃນຄຸກເປັນເວລາສາມສິບທົກປີສິບເອັດ
ເດືອນກັບຊາວຫ້າມື້. [32]ກະສັດ ເອວີນ-ເມໂຣດັກ ໄດ້ຊົງ ເຮັດກັບກະສັດ ເຢໂຮຢາກິນ ດ້ວຍຄວາມ
ເມດຕາຊົງ ໃຫ້ກຽດ ແກ່ພະອົງຫລາຍກວ່າ ໃຫ້ ແກ່ກະສັດອົງອື່ນໆ ທີ່ຖືກຈັບມາກຸງ ບາບີໂລນ.
[33]ດັ່ງນັ້ນ ເຢໂຮຢາກິນ ຈຶ່ງໄດ້ຖ່າຍເຄື່ອງນຸ່ງນັກໂທດອອກຈາກກາຍ ແລະໄດ້ຮັບປະທານອາ-
ຫານທີ່ໂຕະສະເຫວີຍຂອງພະລາຊາທຸກມື້ຈົນສິ້ນພະຊົນ. [34]ແຕ່ລະມື້ໃນເວລາຊົງພະຊົນຢູ່ ພະ
ອົງໄດ້ຊົງຮັບຂອງພະລາຊະທານຈາກກະສັດຕາມຄວາມຕ້ອງການຢູ່ສະເໝີ.

* * *

# ເພງຄ່ຳຄວນ

## ບົດທີ 1

### ເພງຄ່ຳຄວນບົດທຳອິດ

1 ເມືອງທີ່ເຕັມໄປດ້ວຍພົນລະເມືອງມາຢ່າງອ້າງວ້າງເປົ່າແປນແທ້ນໍ
ເມືອງທີ່ຮຸ່ງເຮືອງຢູ່ທ່າມກາງບັນດາປະຊາຊາດ ເປັນດັ່ງແມ່ໝ້າຍ
ເມືອງທີ່ເປັນດັ່ງເຈົ້າຍິງທ່າມກາງເມືອງທັງຫລາຍກໍກັບເປັນເມືອງຂື້ນຂອງເຂົາໄປແລ້ວ
2 ເມືອງນັ້ນຮ້ອງໄຫ້ສະອື້ນໃນຍາມລາຕີ ແລະນ້ຳຕາຂອງນາງກໍອາບແກ້ມ
ນາງຈະຫາໃຜໃນທ່າມກາງຄົນທີ່ຮັກນາງໃຫ້ມາອອຍໃຈນາງກໍຫາບໍ່ພົບ
ບັນດາພວກໝູ່ຂອງນາງໝົດທຸກຄົນໄດ້ທໍລະຍົດຕໍ່ນາງ
ພວກເຂົາທັງປວງກັບເປັນສັດຕູຂອງນາງ
3 ຢູດາໄດ້ຖືກກວາດໄປເປັນຊະເລີຍ ໄດ້ຮັບຄວາມທຸກໃຈ ຕ້ອງເຮັດວຽກຢ່າງຂ້າທາດ
ນາງຕ້ອງອາໄສຢູ່ທ່າມກາງປະຊາຊາດທັງຫລາຍ
ນາງບໍ່ພົບບ່ອນຢຸດພັກສະຫງົບເລີຍ
ບັນດາຜູ້ຂົ່ມເຫັງໄດ້ໄລ່ທັນນາງເມື່ອເວລານາງທຸກໃຈ
4 ຖະໜົນຫົນທາງທີ່ເຂົ້າເມືອງຊີໂອນກໍໂສກເສົ້າຢູ່
ເພາະວ່າບໍ່ມີຜູ້ໃດຍ່າງໄປໃນງານເທດສະການ
ບັນດາປະຕູເມືອງຂອງນາງກໍຮົກຮ້າງເພພັງໄປແລ້ວ
ພວກປະໂລຫິດທັງປວງຂອງນາງໄດ້ພາກັນຖອນຫາຍໃຈ
ສາວປອດທັງຫລາຍໃນເມືອງກໍຕ້ອງທົນທຸກ
ແລະຕົວນາງເອງກໍໄດ້ຮັບຄວາມຂົມຂື່ນໃຈ
5 ພວກສັດຕູຂອງນາງກາຍເປັນຫົວໜ້າ ພວກສັດຕູຂອງນາງໄດ້ຈະເລີນຂຶ້ນ
ດ້ວຍວ່າພຣະຜູ້ເປັນເຈົ້າໄດ້ເຮັດໃຫ້ນາງທົນທຸກ
ເພາະວ່າຄວາມທໍລະຍົດອັນໃຫຍ່ຫລວງຂອງນາງ
ລູກເຕົ້າທັງຫລາຍຂອງນາງຕົກໄປເປັນຊະເລີຍຕໍ່ໜ້າພວກສັດຕູ
6 ແລະຄວາມຮຸ່ງເຮືອງໄດ້ໜີໄປຈາກລູກສາວຂອງເມືອງຊີໂອນແລ້ວ
ພວກເຈົ້ານາຍຂອງນາງກໍກັບເປັນດັ່ງຝູງກວາງທີ່ຫາທົ່ງຫຍ້າລ້ຽງຊີວິດບໍ່ໄດ້
ແລະໄດ້ແລ່ນໄປຢ່າງອິດອ່ອນ ໜີໄປຂ້າງໜ້າຜູ້ທີ່ໄລ່ຕິດຕາມ
7 ເຢຣູຊາເລັມເມື່ອຕົກຢູ່ໃນຍາມທຸກໃຈ
ແລະຍາມລຳບາກກໍໄດ້ຫວນລະນຶກຄຶດເຖິງສິ່ງປະເສີດທີ່ຕົນເຄີຍມີໃນຄາວກ່ອນນັ້ນ
ເມື່ອພົນລະເມືອງຂອງນາງຕົກຢູ່ໃນມືຂອງສັດຕູ ແລະບໍ່ມີຜູ້ໃດຈະສົງເຄາະນາງ
ພວກສັດຕູເຫັນນາງແລ້ວກໍເຍາະເຍີ້ຍຄວາມຫລົ້ມຈົມທັງຫລາຍຂອງນາງ

8 ເຢຣູຊາເລັມໄດ້ເຮັດບາບຢ່າງໃຫຍ່ຫລວງ ເຫດສະນັ້ນ ນາງຈຶ່ງຖືກໄລ່ອອກໄປ
ບັນດາຄົນທີ່ເຄີຍໃຫ້ກຽດນາງກໍໝິ່ນປະໝາດນາງ
ເພາະວ່າພວກເຂົາເຫັນຄວາມເປື້ອຍເປົ່າຂອງນາງ ນາງເອງໄດ້ຖອນໃຈ
ແລະຫັນໜ້າຂອງນາງໄປ
9 ມົນທິນຂອງນາງກໍຕິດຢູ່ໃນກະໂປ່ງຂອງນາງ
ແລະນາງບໍ່ໄດ້ຄຳນຶງເຖິງອະນາຄົດຂອງນາງ
ດັ່ງນັ້ນ ນາງຈຶ່ງໄດ້ເສື່ອມໂຊມລົງໄວຢ່າງໜ້າຕົກໃຈ
ນາງກໍບໍ່ມີຜູ້ໃດຈະເລົ້າໂລມໃຈ “ໂອ ພຣະອົງເຈົ້າເອີຍ
ຂໍທອດພຣະເນດຄວາມທຸກໃຈຂອງຂ້ານ້ອຍ
ເພາະວ່າພວກສັດຕູໄດ້ຍົກຕົວຂຶ້ນແລ້ວດ້ວຍຄວາມຈອງຫອງ”
10 ພວກສັດຕູໄດ້ຍື່ນມືຂອງເຂົາຍຶດເອົາບັນດາສິ່ງປະເສີດຂອງນາງ
ດ້ວຍນາງໄດ້ເຫັນບັນດາປະຊາຊາດບຸກລຸກເຂົ້າມາໃນສະຖານທີ່ບໍລິສຸດຂອງນາງ
ຄືຄົນທີ່ພຣະອົງໄດ້ຫ້າມບໍ່ໃຫ້ເຂົ້າມາໃນຊຸມນຸມຊົນຂອງພຣະອົງ
11 ບັນດາພົນລະເມືອງຂອງນາງໄດ້ຖອນໃຈໃຫຍ່
ເມື່ອພວກເຂົາທັງຫລາຍຊອກຫາອາຫານ
ແລະພວກເຂົາໄດ້ເອົາຂອງປະເສີດຂອງຕົນອອກແລກປ່ຽນອາຫານກິນ
ເພື່ອຈະໄດ້ລ້ຽງຊີວິດ “ຂ້າແດ່ພຣະຜູ້ເປັນເຈົ້າຂໍໂຜດທອດພຣະເນດ
ແລະພິຈາລະນາ ເພາະວ່າຂ້ານ້ອຍໄດ້ຖືກເຍາະເຍີ້ຍໄປແລ້ວ”
12 “ເບິ່ງກ່ອນ ທ່ານທັງຫລາຍທີ່ຍ່າງຜ່ານໄປ ທ່ານບໍ່ເກີດຄວາມຮູ້ສຶກອັນໃດແນ່ບໍ
ເບິ່ງແມ ຈົ່ງເບິ່ງວ່າມີຄວາມທຸກອັນໃດແດ່ທີ່ຈະຄືກັບຄວາມທຸກທີ່ມາສູ່ຂ້ານ້ອຍ
ເປັນຄວາມທຸກຊຶ່ງພຣະຜູ້ເປັນເຈົ້າໄດ້ເຮັດແກ່ຂ້ານ້ອຍ
ໃນວັນທີ່ພຣະອົງໂກດຮ້າຍຂ້ານ້ອຍຢ່າງຮ້າຍແຮງນັ້ນ
13 ພຣະອົງໄດ້ສົ່ງໄຟລົງມາຈາກເບື້ອງເທິງໃຫ້ເຂົ້າໄປໃນກະດູກທັງຫລາຍຂອງຂ້ານ້ອຍ
ພຣະອົງໄດ້ກາງຕາຂ່າຍໄວ້ດັກຈັບຕີນຂອງຂ້ານ້ອຍ
ພຣະອົງໄດ້ເຮັດໃຫ້ຂ້ານ້ອຍຕ້ອງຫັນກັບ ພຣະອົງໄດ້ເຮັດໃຫ້ຂ້ານ້ອຍໂດດດ່ຽວ
ແລະອິດເມື່ອຍຢູ່ຕະຫລອດມື້
14 ການລະເມີດທັງປວງຂອງຂ້ານ້ອຍກໍຖືກຮ່ວມ
ເຂົ້າເປັນແອກໂດຍພຣະຫັດຂອງພຣະອົງມັດໄວ້
ແອກນັ້ນຮັດຮອບຄໍຂ້ານ້ອຍ ພຣະອົງໄດ້ເຮັດໃຫ້ກຳລັງຂອງຂ້ານ້ອຍຖອຍໄປ
ອົງພຣະຜູ້ເປັນເຈົ້າໄດ້ມອບຂ້ານ້ອຍໄວ້ໃນມືຂອງພວກເຂົາ
ຊຶ່ງຂ້ານ້ອຍບໍ່ສາມາດຕໍ່ຕ້ານໄດ້
15 ອົງພຣະຜູ້ເປັນເຈົ້າໄດ້ປະຖິ້ມນັກຮົບທັງປວງຂອງຂ້ານ້ອຍໄວ້
ໃຕ້ພຣະບາດທ່ามກາງຂ້ານ້ອຍ

ພຣະອົງໄດ້ເກນເອົາຊຸມນຸມຊົນເຂົ້າມາຕໍ່ສູ້ຂ້ານ້ອຍ
ເພື່ອຈະຢຽບຊາຍໜຸ່ມຂອງຂ້ານ້ອຍໃຫ້ແຫລກໄປ
ອົງພຣະຜູ້ເປັນເຈົ້າໄດ້ຢຽບລູກສາວປອດຂອງຢູດາ
ເໝືອນດັ່ງຢຽບໝາກອະງຸ່ນລົງໃນອ່າງຢຽບອະງຸ່ນ
16 ເພາະເຫດນີ້ເອງທີ່ຂ້ານ້ອຍຮ້ອງໄຫ້ ໃນຕາຂອງຂ້ານ້ອຍ
ແລະດວງຕາຂອງຂ້ານ້ອຍມີນ້ຳຕາໄຫລລົງມາ
ເພາະວ່າຜູ້ປອບໃຈຢູ່ໄກຈາກຂ້ານ້ອຍ ຄືຜູ້ທີ່ປຸກໃຈຂ້ານ້ອຍ
ແລະພວກລູກຂອງຂ້ານ້ອຍກໍໂດດດ່ຽວ ເພາະວ່າພວກສັດຕູໄດ້ໄຊຊະນະ”
17 ເມືອງຊີໂອນໄດ້ຢຽດມືທັງສອງອອກອ້ອນວອນ
ແຕ່ກໍບໍ່ມີໃຜທີ່ຈະເລົ້າໂລມໃຈນາງໄດ້
ພຣະຜູ້ເປັນເຈົ້າມີພຣະບັນຊາເລື່ອງຢາໂຄບວ່າ
ໃຫ້ພວກທີ່ຢູ່ອ້ອມຢາໂຄບກາຍເປັນສັດຕູ
ເຢຣູຊາເລັມເປັນດັ່ງຜູ້ຍິງທີ່ມີປະຈຳເດືອນທ່າມກາງພວກເຂົາທັງຫລາຍ
18 “ພຣະຜູ້ເປັນເຈົ້າຊອບທຳແລ້ວ
ເພາະວ່າຂ້ານ້ອຍໄດ້ກະບົດຕໍ່ພຣະບັນຍັດຂອງພຣະອົງ
ເບິ່ງກ່ອນ ບັນດາຊົນຊາດທັງຫລາຍ ຂ້ານ້ອຍຂໍໃຫ້ທ່ານໄດ້ຟັງ
ແລະຂໍມາເບິ່ງຄວາມທົນທຸກຂອງຂ້ານ້ອຍ ສາວປອດຂອງຂ້ານ້ອຍ
ແລະຊາຍໜຸ່ມຂອງຂ້ານ້ອຍຕົກໄປເປັນຊະເລີຍແລ້ວ
19 ຂ້ານ້ອຍໄດ້ຮ້ອງເອີ້ນບັນດາຄົນຮັກຂອງຂ້ານ້ອຍ
ແຕ່ພວກເຂົາທັງຫລາຍໄດ້ຫລອກລວງຂ້ານ້ອຍ
ພວກປະໂລຫິດແລະພວກຜູ້ໃຫຍ່ຂອງຂ້ານ້ອຍກໍຕາຍຢູ່ກາງເມືອງ
ຂະນະທີ່ພວກເຂົາອອກຫາອາຫານເພື່ອລ້ຽງຊີວິດຂອງຕົນ
20 ໂອພຣະຜູ້ເປັນເຈົ້າເອີຍ ໂຜດທອດພຣະເນດ
ເພາະວ່າຂ້ານ້ອຍມີຄວາມທຸກ ຈິດໃຈຂອງຂ້ານ້ອຍມີຄວາມທໍລະມານ
ຈິດໃຈຂອງຂ້ານ້ອຍວຸ້ນວາຍເພາະວ່າຂ້ານ້ອຍມັກກະບົດຢ່າງຮ້າຍແຮງ
ຕາມທາງມີຄົນຕ້ອງຕາຍດ້ວຍຄົມດາບ ໃນເຮືອນກໍມີຄົນຕາຍຢູ່
21 ພວກເຂົາທັງຫລາຍໄດ້ຍິນວ່າ ຂ້ານ້ອຍຖອນໃຈຢ່າງໃດ ບໍ່ມີຜູ້ໃດປອບໃຈຂ້ານ້ອຍ
ບັນດາສັດຕູຂອງຂ້ານ້ອຍໄດ້ຍິນເຖິງເຫດຮ້າຍທີ່ຕົກແກ່ຂ້ານ້ອຍ
ພວກເຂົາທັງຫລາຍກໍພາກັນດີໃຈທີ່ພຣະອົງໄດ້ເຮັດຢ່າງນີ້
ພຣະອົງຈະນຳວັນເວລາທີ່ພຣະອົງປະກາດໄວ້ນັ້ນໃຫ້ມາເຖິງ
ແລະພວກເຂົາຈະເປັນຢ່າງທີ່ຂ້ານ້ອຍເປັນຢູ່ນີ້
22 ຂໍໃຫ້ບັນດາການຊົ່ວຂອງພວກເຂົາມາປາກົດຕໍ່ພຣະພັກພຣະອົງ
ແລະຂໍເຮັດແກ່ພວກເຂົາ ຄືທີ່ພຣະອົງໄດ້ເຮັດແກ່ຂ້ານ້ອຍ

ເພາະການລະເມີດທັງໝົດຂອງຂ້ານ້ອຍ
ດ້ວຍຄວາມສະເທືອນໃຈຫລາຍເທື່ອຂອງຂ້ານ້ອຍ
ແລະຈິດໃຈຂອງຂ້ານ້ອຍກໍອ່ອນເພຍເຕັມທີແລ້ວ”

# ບົດທີ 2

## ເພງຄ່ໍາຄວນບົດທີສອງ

1 ດ້ວຍພຣະພິໂລດ ອົງພຣະຜູ້ເປັນເຈົ້າໃຊ້ເມກບັງລູກສາວຂອງເມືອງຊີໂອນ
ພຣະອົງໄດ້ຖິ້ມສະຫງ່າລາສີຂອງອິສຣາເອນໃຫ້ຕົກລົງຈາກຟ້າເຖິງດິນ
ພຣະອົງບໍ່ໄດ້ລະນຶກເຖິງແທ່ນຮອງຕີນຂອງພຣະອົງເລີຍໃນຍາມທີ່ພຣະອົງໂກດຮ້າຍ
2 ອົງພຣະຜູ້ເປັນເຈົ້າທໍາລາຍບ່ອນຢູ່ຂອງຢາໂຄບໄປໝົດແລ້ວ
ໂດຍປາດສະຈາກພຣະກະລຸນາ
ດ້ວຍພຣະພິໂລດຂອງພຣະອົງໄດ້ພັງບ່ອນກໍາບັງທັງຫລາຍຂອງລູກສາວຢູດາ
ໃຫ້ມຸ່ນທະລາຍລົງ ພຣະອົງໄດ້ເຮັດໃຫ້ຕໍ່າລົງເຖິງດິນ
ໃຫ້ລາຊະອານາຈັກ ແລະເຈົ້ານາຍເປັນມົນທິນ
3 ດ້ວຍພຣະພິໂລດອັນຮຸນແຮງ
ພຣະອົງໄດ້ຕັດບັນດາອໍານາດຂອງອິສຣາເອນໃຫ້ຂາດໝົດໄປ
ພຣະອົງຫົດມືເບື້ອງຂວາມາຈາກເຂົາຕໍ່ໜ້າສັດຕູ
ພຣະອົງເຜົາຜານຄົນຢາໂຄບດັ່ງໄຟໄໝ້ລາມໄປອ້ອມຮອບ
4 ພຣະອົງກົ່ງທະນູຂອງພຣະອົງເໝືອນດັ່ງສັດຕູ
ຍົກມືເບື້ອງຂວາເໝືອນດັ່ງເປັນຜູ້ຂັດຂວາງ
ແລະໄດ້ປະຫານບັນດາຄົນທີ່ເຮົາຈະອວດໄດ້ນັ້ນ
ໃນເຕັນຂອງລູກສາວແຫ່ງຊີໂອນ
ພຣະອົງໄດ້ຊົງລະບາຍພຣະພິໂລດຂອງພຣະອົງອອກມາດັ່ງໄຟໄໝ້
5 ອົງພຣະຜູ້ເປັນເຈົ້າຊົງກາຍເປັນສັດຕູ ພຣະອົງໄດ້ທໍາລາຍພວກອິສຣາເອນ
ພຣະອົງໄດ້ກືນກິນບັນດາວັງຂອງນາງໄປໝົດ
ແລະໄດ້ທໍາລາຍບ່ອນກໍາບັງຂອງເຂົາໃຫ້ເພພັງ
ເພີ່ມທະວີຄວາມເສົ້າໂສກ ແລະການຄ່ໍາຄວນໃນລູກສາວຂອງຢູດາ
6 ພຣະອົງໄດ້ພັງທໍາເຕັນຂອງພຣະອົງຄືດັ່ງໄຟໄໝ້ສວນ
ທໍາລາຍສະຖານປະຊຸມຂອງພຣະອົງ
ພຣະຜູ້ເປັນເຈົ້າໄດ້ເຮັດໃຫ້ເທດສະການຕາມກໍານົດ
ແລະມື້ສະບາໂຕໝົດສິ້ນໄປໃນຊີໂອນ
ດ້ວຍພຣະພິໂລດທີ່ຊົງມີຕໍ່ກະສັດ ແລະປະໂລຫິດ
7 ອົງພຣະຜູ້ເປັນເຈົ້າໄດ້ຖິ້ມແທ່ນບູຊາຂອງພຣະອົງໄປ

ພຣະອົງກຽດຊັງສະຖານທີ່ບໍລິສຸດຂອງພຣະອົງ ກໍາແພງວັງທັງຫລາຍນັ້ນ
ພຣະອົງໄດ້ມອບໄວ້ໃນເງື້ອມມືສັດຕູ
ພວກເຂົາໄດ້ສົ່ງສຽງອຶກກະທຶກໃນພຣະວິຫານຂອງພຣະຜູ້ເປັນເຈົ້າ
ເໝືອນດັ່ງໃນມື້ເທດສະການ
8 ພຣະຜູ້ເປັນເຈົ້າໄດ້ຕັ້ງພຣະໄທໄວ້ແລ້ວວ່າຈະທໍາລາຍກໍາແພງຂອງລູກສາວແຫ່ງຊີໂອນ
ພຣະອົງໄດ້ດຶງສາຍວັດແທກໄວ້ແລ້ວ ພຣະອົງບໍ່ໄດ້ຫົດມືຈາກການທໍາລາຍ
ເຫດສັນນັ້ນ ພຣະອົງໄດ້ເຮັດໃຫ້ໂນນດິນ ແລະກໍາແພງນັ້ນຄໍ່າຄວນ
ໃຫ້ຊຸດໂຊມລົ້ມລົງໄປນໍາກັນ
9 ປະຕູເມືອງຊີໂອນທັງໝົດລົ້ມລົງໃນດິນແລ້ວ
ພຣະອົງໄດ້ທໍາລາຍ ແລະຫັກບານປະຕູທັງປວງ
ກະສັດແລະເຈົ້ານາຍທັງຫລາຍຂອງຊີໂອນ
ກໍຕົກຢູ່ທ່າມກາງປະຊາຊາດ ພຣະບັນຍັດບໍ່ມີອີກແລ້ວ
ບັນດາຜູ້ທໍານວາຍຂອງເມືອງຊີໂອນບໍ່ໄດ້ຮັບນິມິດຈາກພຣະຜູ້ເປັນເຈົ້າອີກ
10 ພວກຜູ້ໃຫຍ່ຂອງລູກສາວແຫ່ງຊີໂອນກໍກໍາລັງນັ່ງມິດງຽບຢູ່ເທິງພື້ນແຜ່ນດິນ
ພວກເຂົາເອົາຂີ້ຝຸ່ນດິນຊັດຂຶ້ນເທິງຫົວຂອງຕົນ ແລະນຸ່ງຫົ່ມຜ້າກະສອບ
ສາວປອດທັງຫລາຍຂອງເມືອງເຢຣູຊາເລັມຄໍ້ຕົກໄປເຖິງດິນ
11 ໃນຕາຂອງຂ້ານ້ອຍກໍເປື່ອຍໄປເພາະຮ້ອງໄຫ້ ຈິດວິນຍານຂອງຂ້ານ້ອຍກໍລະທົມ
ເພາະວ່າຄວາມຈິບຫາຍຂອງລູກສາວແຫ່ງຊົນຊາດຂອງຂ້ານ້ອຍ
ຈິດໃຈຂອງຂ້ານ້ອຍກໍລະທົມຂົມຂື່ນ
ເພາະວ່າພວກເດັກນ້ອຍແລະເດັກນ້ອຍທີ່ຍັງດູດນົມນັ້ນ
ເປັນລົມສະຫລົບຢູ່ຕາມຖະໜົນໃນເມືອງ
12 ລູກທັງຫລາຍຖາມແມ່ຂອງຕົນວ່າ “ແມ່ເອີຍ ເຂົ້າແລະນໍ້າອະງຸ່ນມີຢູ່ໃສ”
ຂະນະທີ່ພວກເຂົາເປັນລົມດັ່ງຄົນທີ່ຖືກບາດເຈັບຕາມຖະໜົນໃນເມືອງ
ເມື່ອຊີວິດຂອງພວກເຂົາຕ້ອງເທອອກເທິງເອິກແມ່ຂອງພວກເຂົາເອງ
13 ໂອ ລູກສາວຂອງເຢຣູຊາເລັມເອີຍ ຂ້ານ້ອຍຈະເອົາອັນໃດມາປຽບກັບເຈົ້າໄດ້
ຂ້ານ້ອຍຈະປຽບເຈົ້າກັບອັນໃດ ໂອ ສາວປອດຂອງຊີໂອນເອີຍ
ຂ້ານ້ອຍຈະຫາອັນໃດທີ່ເທົ່າກັບເຈົ້າໄດ້ ເພື່ອຂ້ານ້ອຍຈະອອຍໃຈເຈົ້າໄດ້
ເພາະວ່າຄວາມຫລົ້ມຈົມຂອງເຈົ້າກໍໃຫຍ່ຫລວງເທົ່າທະເລ
ຜູ້ໃດຈະປິ່ນປົວເຈົ້າໃຫ້ດີໄດ້ອີກ
14 ຜູ້ທໍານວາຍທັງຫລາຍຂອງເຈົ້າໄດ້ເຫັນນິມິດລວງອັນບໍ່ມີປະໂຫຍດ
ແລະໂງ່ຈ້າມາບອກເຈົ້າ ແທນທີ່ພວກເຂົາຈະເຜີຍຄວາມຊົ່ວຊ້າຂອງເຈົ້າອອກມາໃຫ້ຮູ້
ເພື່ອຈະໃຫ້ເຈົ້າພົ້ນຈາກຄວາມຊົ່ວ
ພວກເຂົາກັບເຫັນຄໍາໂອ້ອວດເປັນຂອງບໍ່ມີປະໂຫຍດ

ເປັນເຫດໃຫ້ເຈົ້າຖືກເນລະເທດ
15 ບັນດາຄົນທີ່ໄດ້ຜ່ານເຈົ້າໄປກໍໄດ້ຕົບມືເຍາະເຍີ້ຍເຈົ້າ ພວກເຂົາທັງຫລາຍໄດ້ຫຍໍ້ຫຍັນ
ແລະໄດ້ສັ່ນຫົວຍ້ອນລູກສາວຂອງ ເຢຣູຊາເລັມ ແລ້ວວ່າ
"ນີ້ບໍ ຄືເມືອງທີ່ຄົນທັງຫລາຍໄດ້ຂະໜານນາມວ່າ ງົດງາມ
ຊຶ່ງເປັນຄວາມຊົມຊື່ນຍິນດີຂອງຄົນທົ່ວທັງໂລກ"
16 ບັນດາສັດຕູຂອງເຈົ້າໄດ້ອ້າປາກຮ້ອງປະກາດຕໍ່ສູ້ເຈົ້າ ພວກເຂົາຫຍໍ້ຫຍັນ
ແລະຂົບແຂ້ວ ພາກັນຮ້ອງວ່າ "ພວກເຮົາໄດ້ກືນກິນເມືອງນີ້ແລ້ວ
ມື້ນີ້ແຫລະຄືມື້ທີ່ພວກເຮົາໄດ້ຄອງຫາ ພວກເຮົາໄດ້ພົບແລ້ວ ພວກເຮົາເຫັນແລ້ວ"
17 **ພຣະຜູ້ເປັນເຈົ້າ** ໄດ້ເຮັດຕາມພຣະປະສົງແລ້ວ
ໄດ້ເຮັດໃຫ້ພຣະດຳລັດຂອງພຣະອົງສຳເລັດ ຕາມທີ່ພຣະອົງໄດ້ບັນຊາໄວ້ດົນແລ້ວ
ພຣະອົງໄດ້ທຳລາຍລົງຢ່າງບໍ່ມີພຣະເມດຕາ
ພຣະອົງເຮັດໃຫ້ສັດຕູຊົມຊື່ນຍິນດີຍ້ອນເຈົ້າ
ພຣະອົງໄດ້ຊູແຮງຂອງພວກສັດຕູຂອງເຈົ້າຂຶ້ນ
18 ຈິດໃຈຂອງພວກເຂົາຮ້ອງທູນອົງ **ພຣະຜູ້ເປັນເຈົ້າ** ວ່າ
ໂອ ກຳແພງຂອງລູກສາວແຫ່ງຊີໂອນ ເອີຍ
ຈົ່ງຫລັ່ງນ້ຳຕາໃຫ້ໄຫລອາບທັງກາງເວັນ ແລະກາງຄືນ ເໝືອນດັ່ງນ້ຳໃນລຳທານ
ເຈົ້າຢ່າໄດ້ຢຸດ ຢ່າໃຫ້ແກ້ວຕາຂອງເຈົ້າເຫືອດແຫ້ງເລີຍ
19 ຈົ່ງລຸກຂຶ້ນຮ້ອງໄຫ້ໃນກາງຄືນ
ເມື່ອເຖິງເວລາຈົ່ງລະບາຍຄວາມໃນໃຈຂອງເຈົ້າອອກ
ເໝືອນຢ່າງນ້ຳຕໍ່ພຣະພັກອົງ **ພຣະຜູ້ເປັນເຈົ້າ**
ຈົ່ງຍົກມືທັງສອງຂອງເຈົ້າຂຶ້ນໄປຫາພຣະອົງ
ເພື່ອຂໍຊີວິດຂອງບັນດາລູກນ້ອຍຂອງເຈົ້າ
ທີ່ຫິວຈົນເປັນລົມສະຫລົບໄປຕາມແຈຖະໜົນຫົນທາງທຸກແຫ່ງ
20 ໂອ**ພຣະຜູ້ເປັນເຈົ້າ** ເອີຍ ຂໍທອດພຣະເນດ ແລະພິຈາລະນາເບິ່ງວ່າ
ພຣະອົງໄດ້ເຮັດການເຊັ່ນນີ້ແກ່ຜູ້ໃດ ພວກຜູ້ຍິງຄວນທີ່ຈະກິນລູກຂອງຕົນບໍ
ຈະກິນເດັກນ້ອຍທີ່ຍັງອຸ້ມຢູ່ບໍ ພວກປະໂລຫິດ
ແລະພວກຜູ້ທຳນວຍຄວນຈະຖືກປະຫານ
ໃນສະຖານທີ່ບໍລິສຸດຂອງອົງ **ພຣະຜູ້ເປັນເຈົ້າ** ບໍ
21 ຄົນໜຸ່ມ ແລະຄົນເຖົ້າແກ່ນອນຢຽດຢູ່ຕາມພື້ນດິນໃນຖະໜົນ
ສາວປອດ ແລະຊາຍໜຸ່ມຂອງຂ້ານ້ອຍຖືກຄົມດາບລົ້ມລົງແລ້ວ
ພຣະອົງໄດ້ປະຫານພວກເຂົາໃນວັນທີ່ພຣະອົງຊົງໂກດຮ້າຍ
ໄດ້ສັງຫານພວກເຂົາໂດຍປາດສະຈາກພຣະກະລຸນາ
22 ພຣະອົງໄດ້ເອີ້ນເອົາຄວາມຢ້ານຂອງຂ້ານ້ອຍມາອ້ອມທຸກດ້ານ

ເໝືອນດັ່ງມາໂຮມໃນວັນເທດສະການກິນລ້ຽງ
ເມື່ອເຖິງວັນທີ່ພຣະຜູ້ເປັນເຈົ້າພຣະພິໂລດ ກໍບໍ່ມີຈັກຄົນໜຶ່ງໜີເອົາຕົວລອດໄດ້
ຫລືເຫລືອຕົກຄ້າງລອດຕາຍຢູ່
ຜູ້ທີ່ຂ້ານ້ອຍໄດ້ອຸ້ມຊູ ແລະລ້ຽງດູມານັ້ນ ສັດຕູຂອງຂ້ານ້ອຍໄດ້ເຜົາຜານໄປໝົດແລ້ວ

# ບົດທີ 3

## ເພງຄໍ່າຄວນບົດທີສາມ

1 ຂ້ານ້ອຍເປັນຄົນທີ່ໄດ້ເຫັນຄວາມທຸກໃຈ
ໂດຍໄມ້ແສ້ແຫ່ງພຣະພິໂລດຂອງພຣະອົງ
2 ພຣະອົງນໍາ ແລະພາຂ້ານ້ອຍມາໃນຄວາມມືດ
ບໍ່ແມ່ນໃນຄວາມສະຫວ່າງ
3 ແທ້ຈິງ ພຣະອົງຫັນມາຕໍ່ສູ້ຂ້ານ້ອຍ
ພຣະອົງພິກພຣະຫັດຂອງພຣະອົງຕໍ່ສູ້ຂ້ານ້ອຍຢູ່ຕະຫລອດມື້ເລື້ອຍໄປ
4 ຊີ້ນ ແລະໜັງຂ້ານ້ອຍ ພຣະອົງຊົງເຮັດໃຫ້ຫ່ຽວແຫ້ງ
ພຣະອົງຫັກກະດູກຂ້ານ້ອຍແລ້ວ
5 ພຣະອົງສ້າງຮົ້ວຂັງຂ້ານ້ອຍ ເອົາຄວາມຂົມຂື່ນ
ແລະຄວາມທຸກຍາກລໍາບາກອ້ອມຂ້ານ້ອຍໄວ້
6 ພຣະອົງໄດ້ບັງຄັບຂ້ານ້ອຍໃຫ້ຢູ່ໃນບ່ອນມືດ
ເໝືອນດັ່ງຄົນທີ່ຕາຍດົນແລ້ວ
7 ພຣະອົງເຮັດຮົ້ວລ້ອມຂ້ານ້ອຍໄວ້ເພື່ອຈະກັກຂັງບໍ່ໃຫ້ອອກໄປໄດ້
ພຣະອົງໃສ່ໂສ້ໜັກລ່າມຂ້ານ້ອຍໄວ້
8 ຫລາຍກວ່ານັ້ນ ເມື່ອຂ້ານ້ອຍຮ້ອງສຽງດັງ
ພຣະອົງບໍ່ຟັງຄໍາອະທິຖານຂອງຂ້ານ້ອຍ
9 ພຣະອົງອ້ອມທາງທັງຫລາຍຂອງຂ້ານ້ອຍດ້ວຍກ້ອນຫີນທີ່ສະກັດ
ພຣະອົງເຮັດໃຫ້ຫົນທາງຂອງຂ້ານ້ອຍຄົດໄປ
10 ທີ່ຂ້ານ້ອຍ ພຣະອົງເຮັດຄືໝີຄອຍຖ້າຄຸບ
ແລະເໝືອນດັ່ງສິງດັກຊຸ້ມຢູ່ໃນບ່ອນລັບລີ້
11 ພຣະອົງພາຂ້ານ້ອຍອອກໄປຈາກທາງຂອງຂ້ານ້ອຍ
ແລະຈີກຂ້ານ້ອຍເປັນຕ່ອນໆພຣະອົງຊົງເຮັດໃຫ້ຂ້ານ້ອຍວ່າງເປົ່າ
12 ພຣະອົງກົ່ງທະນູຂອງພຣະອົງ
ແລະຊົງເອົາຂ້ານ້ອຍຕັ້ງເປັນເປົ້າໝາຍສໍາລັບລູກທະນູ
13 ພຣະອົງເອົາລູກທະນູໃນບ່ອນຂອງພຣະອົງ
ຍິງເຂົ້າໃນຫົວໃຈຂອງຂ້ານ້ອຍແລ້ວ

14 ຂ້ານ້ອຍໄດ້ກາຍເປັນບ່ອນນິນທາໃຫ້ຊົນຊາດທັງຫລາຍຫົວຂວັນ
ເປັນບົດເພງໃຫ້ພວກເຂົາຮ້ອງຫລິ້ນໝົດມື້
15 ພຣະອົງໃຫ້ຂ້ານ້ອຍກິນຄວາມທຸກຂົມຂື່ນໃຈຈົນອີ່ມ
ພຣະອົງໃຫ້ຂ້ານ້ອຍເມົາໄປດ້ວຍເຄືອເຂົາຮໍ
16 ພຣະອົງຊົງເຮັດໃຫ້ແຂ້ວຂ້ານ້ອຍຫັກໂດຍຫຍ້ຳຫີນແຫ່
ແລະປົກຄຸມຂ້ານ້ອຍດ້ວຍຂີ້ເທົ່າ
17 ພຣະອົງຊົງເຮັດໃຫ້ຈິດວິນຍານຂອງຂ້ານ້ອຍຂາດຄວາມສະຫງົບສຸກ
ຈົນຂ້ານ້ອຍລືມຄວາມຮຸ່ງເຮືອງວ່າເປັນຢ່າງໃດ
18 ຂ້ານ້ອຍຈຶ່ງວ່າ "ກຳລັງ
ແລະຄວາມຫວັງຊຶ່ງຂ້ານ້ອຍໄດ້ຈາກພຣະຜູ້ເປັນເຈົ້າກໍດັບສິ້ນ"
19 ຂໍຈື່ຄວາມທຸກໃຈ ແລະຄວາມປວດໃຈຂອງຂ້ານ້ອຍ
ອັນເປັນເຄືອເຂົາຮໍ ແລະບີໝີ
20 ຈິດວິນຍານຂອງຂ້ານ້ອຍຍັງນຶກເຖິງເລື້ອຍໆ
ແລະຕ້ອງຖ່ອມລົງພາຍໃນຕົວຂ້ານ້ອຍ
21 ຂ້ານ້ອຍທວນຄິດຂຶ້ນມາໄດ້
ຂ້ານ້ອຍຈຶ່ງມີຄວາມຫວັງ
22 ເພາະວ່າຄວາມຮັກຂອງພຣະຜູ້ເປັນເຈົ້າກໍໝັ້ນຄົງ
ແລະພຣະເມດຕາຂອງພຣະອົງບໍ່ມີສິ້ນສຸດ
23 ເປັນສິ່ງໃໝ່ຢູ່ທຸກຕອນເຊົ້າ
ຄວາມສັດຊື່ຂອງພຣະອົງຍິ່ງໃຫຍ່ຫລາຍ
24 ຈິດໃຈຂອງຂ້ານ້ອຍກ່າວວ່າ "ພຣະຜູ້ເປັນເຈົ້າເປັນສ່ວນຂອງຂ້ານ້ອຍ
ເຫດສັນນັ້ນ ຂ້ານ້ອຍຈະຫວັງໃນພຣະອົງ"
25 ພຣະຜູ້ເປັນເຈົ້າດີຕໍ່ຄົນທັງປວງທີ່ຄອຍຖ້າພຣະອົງຢູ່
ແລະດີຕໍ່ຈິດວິນຍານທີ່ສະແຫວງຫາພຣະອົງ
26 ເປັນການດີທີ່ຄົນເຮົາຈະຫວັງໃຈ
ແລະລໍຖ້າຄວາມພົ້ນຈາກພຣະຜູ້ເປັນເຈົ້າ
27 ເປັນການດີທີ່ຄົນເຮົາຈະແບກແອກຍາມຍັງໜຸ່ມ
28 ໃຫ້ລາວນັ່ງງຽບໆຢູ່ແຕ່ຜູ້ດຽວ
ເພາະວ່າພຣະອົງວາງແອກນັ້ນເອງ
29 ໃຫ້ລາວເອົາປາກຈຸໃນຂີ້ຝຸ່ນດິນ
ຖ້າເຮັດດັ່ງນັ້ນ ກໍອາດຈະມີຫວັງ
30 ໃຫ້ລາວຫງາຍແກ້ມໃຫ້ຜູ້ທີ່ຕົບລາວ
ໃຫ້ລາວຍອມຮັບຄວາມອັບອາຍຢ່າງເຕັມປ່ຽມສາ

31 ດ້ວຍວ່າອົງ ພຣະຜູ້ເປັນເຈົ້າ ຈະບໍ່ປະຖິ້ມຕະຫລອດໄປຢ່າງເດັດຂາດ
32 ແມ່ນພຣະອົງຊົງເຮັດໃຫ້ເກີດຄວາມເສົ້າໂສກ
ພຣະອົງຈະຊົງພຣະກະລຸນາຕາມຄວາມເມດຕາອັນລົ້ນເຫລືອຂອງພຣະອົງ
33 ເພາະວ່າພຣະອົງເຮັດໃຫ້ໃຜເກີດຄວາມທຸກໃຈ
ຫລືໃຫ້ລູກທັງຫລາຍຂອງມະນຸດມີຄວາມໂສກເສົ້າດ້ວຍຊອບພຣະໄທກໍບໍ່ໄດ້
34 ການຢຽບຢ່ຳບັນດາຊະເລີຍຂອງແຜ່ນດິນໂລກໄວ້ໃຕ້ຕີນກໍດີ
35 ການຕັດສິດຂອງມະນຸດຜູ້ໜຶ່ງຜູ້ໃດຕໍ່ພຣະພັກຂອງ ພຣະຜູ້ເປັນເຈົ້າ ສູງສຸດກໍດີ
36 ການຕັດສິນບໍ່ສັດຊື່ໃນຄະດີຂອງມະນຸດກໍດີ
ອົງ ພຣະຜູ້ເປັນເຈົ້າ ບໍ່ພໍພຣະໄທເລີຍ
37 ຜູ້ໃດຈະສັ່ງ ແລະໃຫ້ເປັນໄປໄດ້
ນອກຈາກອົງ ພຣະຜູ້ເປັນເຈົ້າ ບັນຊາໃຫ້ເປັນໄປ?
38 ຈາກພຣະໂອດຂອງພຣະຜູ້ສູງສຸດນັ້ນບໍ່ແມ່ນມີມາທັງຮ້າຍ ແລະດີບໍ?
39 ມະນຸດທີ່ມີຊີວິດຢູ່ຈະໄປຈົ່ມເອົາກັບໃຜ
ຄືມະນຸດທີ່ຖືກລົງໂທດຍ້ອນບາບຂອງຕົນ?
40 ໃຫ້ພວກເຮົາທົດສອບ
ແລະພິຈາລະນາແນວທາງຂອງພວກເຮົາ ແລະກັບມາຫາ ພຣະຜູ້ເປັນເຈົ້າ ສາ
41 ໃຫ້ພວກເຮົາຍົກຈິດໃຈ ແລະມືຂອງພວກເຮົາຂຶ້ນ
ຕໍ່ ພຣະເຈົ້າ ໃນຟ້າສະຫວັນທູນວ່າ
42 "ພວກຂ້ານ້ອຍໄດ້ທໍລະຍົດ ແລະໄດ້ກະບົດແລ້ວ
ແລະພຣະອົງຍັງບໍ່ໄດ້ໂຜດຍົກໂທດ
43 ພຣະອົງຫົ່ມຄວາມໂກດຮ້າຍ ໄລ່ຂົ່ມເຫັງພວກຂ້ານ້ອຍ
ແລະໄດ້ປະຫານຢ່າງບໍ່ສົງສານ
44 ພຣະອົງປົກຄຸມພຣະອົງໄວ້ດ້ວຍເມກ
ເພື່ອວ່າການອະທິຖານຂອງພວກຂ້ານ້ອຍຈະບໍ່ຊອດໄປເຖິງພຣະອົງໄດ້
45 ພຣະອົງໄດ້ເຮັດໃຫ້ພວກຂ້ານ້ອຍເປັນຄືກັບຂີ້ເຫຍື້ອ
ແລະເປັນສິ່ງທີ່ຖິ້ມແລ້ວຢູ່ໃນທ່າມກາງຊົນຊາດທັງຫລາຍ
46 ບັນດາສັດຕູຂອງພວກຂ້ານ້ອຍໄດ້ອ້າປາກຮ້ອງສຽງດັງຕໍ່ສູ້ພວກຂ້ານ້ອຍ
47 ຍ້ອນຄວາມຢ້ານກົວໄດ້ມາເຖິງຂ້ານ້ອຍ ທັງຄວາມວ່າງເປົ່າ
ແລະຄວາມພິນາດຈິບຫາຍ
48 ນ້ຳຕາຂອງຂ້ານ້ອຍໄຫລເປັນແມ່ນ້ຳ
ຍ້ອນຄວາມຈິບຫາຍຂອງລູກສາວແຫ່ງຊົນຊາດຂອງຂ້ານ້ອຍ
49 ນ້ຳຕາຂອງຂ້ານ້ອຍໄຫລລົງບໍ່ຢຸດ
ແລະບໍ່ມີເວລາຢຸດເລີຍ

50 ຈົນກວ່າພຣະຜູ້ເປັນເຈົ້າຈະທອດພຣະເນດລົງມາເບິ່ງຈາກສະຫວັນ
51 ໜ່ວຍຕາຂອງຂ້ານ້ອຍເຮັດໃຫ້ໃຈຂ້ານ້ອຍລະທົມ
ຍ້ອນເຄາະກຳຂອງບັນດາລູກສາວແຫ່ງເມືອງຂ້ານ້ອຍ
52 ພວກທີ່ຕັ້ງຕົນເປັນສັດຕູຕໍ່ຂ້ານ້ອຍໂດຍບໍ່ມີເຫດ
ນັ້ນໄດ້ຂັບໄລ່ຂ້ານ້ອຍເໝືອນດັ່ງໄລ່ນົກ
53 ພວກເຂົາຖິ້ມຂ້ານ້ອຍລົງໃນຄຸກໃຕ້ດິນໃຫ້ຕາຍ
ແລະເອົາຫີນຖົມທັບຂ້ານ້ອຍ
54 ນໍ້າໄດ້ຖ້ວມຫົວຂອງຂ້ານ້ອຍ
ຂ້ານ້ອຍເວົ້າວ່າ 'ຂ້ານ້ອຍຖືກຕັດອອກແນ່ນອນແລ້ວ'
55 ໂອພຣະຜູ້ເປັນເຈົ້າເອີຍ
ຂ້ານ້ອຍໄດ້ຮ້ອງອອກພຣະນາມຂອງພຣະອົງຈາກບ່ອນເລິກໃນຄຸກໃຕ້ດິນ
56 ພຣະອົງໄດ້ຍິນສຽງຂອງຂ້ານ້ອຍວ່າ
'ຂໍຢ່າອັດພຣະກັນຕໍ່ການທັນໃຈ ແລະການຮ້ອງທູນຂອງຂ້ານ້ອຍ'
57 ພຣະອົງເຂົ້າມາໃກ້ໃນວັນທີ່ຂ້ານ້ອຍຮ້ອງທູນຕໍ່ພຣະອົງ
ພຣະອົງບອກວ່າ 'ບໍ່ຕ້ອງຢ້ານ'
58 ຂ້າແດ່ອົງພຣະຜູ້ເປັນເຈົ້າພຣະອົງໄດ້ເອົາຄະດີຂອງຈິດໃຈຂ້ານ້ອຍໄວ້ແລ້ວ
ພຣະອົງຊົງໄຖ່ຊີວິດຂ້ານ້ອຍ
59 ຂ້າແດ່ພຣະຜູ້ເປັນເຈົ້າພຣະອົງຊົງເຫັນການທີ່ເຂົາເຮັດຜິດຕໍ່ຂ້ານ້ອຍແລ້ວ
ຂໍພິພາກສາຄະດີຂອງຂ້ານ້ອຍເຖີດ
60 ພຣະອົງໄດ້ຊົງເຫັນການແກ້ແຄ້ນທັງຫລາຍຂອງພວກເຂົາ
ແລະບັນດາແຜນການທຳຮ້າຍຂ້ານ້ອຍແລ້ວ
61 ຂ້າແດ່ພຣະຜູ້ເປັນເຈົ້າພຣະອົງໄດ້ຍິນຄຳໝິ່ນປະໝາດ
ແລະບັນດາແຜນການທຳຮ້າຍຂ້ານ້ອຍແລ້ວ
62 ຄືຮີມສົບ ແລະຄວາມຄິດຂອງຜູ້ທີ່ໄດ້ຮຸກຮານຂ້ານ້ອຍ
ກໍຕໍ່ສູ້ຂ້ານ້ອຍຢູ່ໝົດມື້
63 ເບິ່ງແມ ບໍ່ວ່າພວກເຂົາຈະນັ່ງຫລືລຸກ
ຕົວຂ້ານ້ອຍກໍເປັນບົດເພງໃຫ້ເຂົາຮ້ອງຫລິ້ນ
64 ຂ້າແດ່ພຣະຜູ້ເປັນເຈົ້າ
ຂໍພຣະອົງຕອບແທນພວກເຂົາທັງຫລາຍຕາມການກະທຳແຫ່ງນໍ້າມືຂອງພວກເຂົາ
65 ຂໍພຣະອົງເຮັດໃຫ້ໃຈຂອງພວກເຂົາທັງປວງມືດມົວໄປ
ແລະຂໍໃຫ້ຄຳສາບແຊ່ງຂອງພຣະອົງຕົກເໜືອພວກເຂົາ
66 ຂໍພຣະອົງຊົງໄລ່ຕິດຕາມພວກເຂົາດ້ວຍພຣະພິໂລດ
ແລະທຳລາຍພວກເຂົາເສຍຈາກໃຕ້ຟ້າສະຫວັນຂອງພຣະຜູ້ເປັນເຈົ້າ"

# ບົດທີ 4

## ເພງຄໍ່າຄວນບົດທີສີ່

1 ເປັນຢ່າງໃດນໍ ຄໍາຈິ່ງມີສີມົ່ນໝອງ ແລະຄໍາບໍລິສຸດກໍປ່ຽນໄປ
ເພັດພອຍຂອງສະຖານທີ່ບໍລິສຸດຖິ້ມຢູ່ກະຈັດກະຈາຍຕາມທຸກແຈຖະໜົນ
2 ລູກຊາຍຜູ້ປະເສີດຂອງເມືອງຊີໂອນມີຄ່າປຽບໄດ້ກັບຄໍາບໍລິສຸດນັ້ນ
ຖືກຕີລາຄາເທົ່າກັບໝໍ້ດິນທີ່ປັ້ນຂຶ້ນດ້ວຍມືຂອງຊ່າງໝໍ້ເທົ່ານັ້ນນໍ
3 ແມ່ນແຕ່ໝາປ່າຍັງໄດ້ເອົານົມອອກໃຫ້ລູກຂອງມັນດູດ
ແຕ່ລູກສາວແຫ່ງຊົນຊາດຂອງຂ້ານ້ອຍກໍໃຈຮ້າຍ
ເໝືອນດັ່ງນົກກະຈອກເທດໃນຖິ່ນແຫ້ງແລ້ງກັນດານ
4 ລີ້ນຂອງເດັກນ້ອຍທີ່ຍັງບໍ່ປະນົມກະຫາຍຈົນຕິດເພດານປາກ
ພວກເດັກນ້ອຍໄດ້ຂໍອາຫານ ແຕ່ບໍ່ມີໃຜຍື່ນໃຫ້ພວກເຂົາ
5 ຄົນທັງປວງທີ່ເຄີຍກິນອາຫານຢ່າງວິເສດກັບຕ້ອງໂດດດ່ຽວຢູ່ຕາມຖະໜົນ
ຄົນທັງຫລາຍທີ່ເຄີຍສວມເສື້ອສີມ່ວງກັບຕ້ອງນອນເທິງກອງຂີ້ເຫຍື້ອ
6 ເພາະວ່າໂທດຄວາມຊົ່ວຊ້າຂອງລູກສາວແຫ່ງຊົນຊາດຂ້ານ້ອຍນັ້ນ
ກໍໃຫຍ່ກວ່າໂທດບາບຂອງເມືອງໂຊໂດມທີ່ຕ້ອງຄວໍ້າທະລາຍລົງໃນພັບຕາດຽວ
ໂດຍບໍ່ມີມືໃຜໄດ້ແຕະຕ້ອງເລີຍ
7 ພວກເຈົ້ານາຍນັ້ນບໍລິສຸດກວ່າຫິມະ ແລະຂາວກວ່ານໍ້ານົມ
ຜິວພັນຂອງພວກເຂົາແດງສົດໃສຍິ່ງກວ່າທັບທິມ
ພວກເຂົາມີຮູບຮ່າງງາມດັ່ງເພັດພອຍ
8 ບັດນີ້ ຜິວພັນຂອງພວກເຂົາກໍດໍາຍິ່ງກວ່າຂີ້ໝິ່ນໝໍ້ ແມ່ນໃຜຕາມຖະໜົນກໍຈື່ເຂົາບໍ່ໄດ້
ໜັງຂອງພວກເຂົາຫ່ຽວຫຸ້ມກະດູກ ແລະຈ່ອຍຄືກັບສັ່ງນໄມ້
9 ຄົນທີ່ຕາຍດ້ວຍຄົມດາບຍັງດີກວ່າຄົນທີ່ຕ້ອງຕາຍອຶດຕາຍຢາກ
ເພາະວ່າຄົນເຫລົ່ານີ້ຈ່ອຍແຫ້ງລົງຍ້ອນບໍ່ມີຜົນຈາກທົ່ງນາ
10 ມືຂອງຍິງທີ່ໃຈອ່ອນຈັບເອົາລູກຂອງຕົນຕົ້ມກິນ ລູກທີ່ຖືກຕົ້ມເປັນອາຫານນັ້ນ
ກິນກັນເມື່ອຍາມຫາຍະນະມາສູ່ລູກສາວແຫ່ງຊົນຊາດຂອງຂ້ານ້ອຍ
11 ພຣະຜູ້ເປັນເຈົ້າບັນດານຄວາມໂກດຮ້າຍອອກມາແລ້ວ
ພຣະອົງຖອກພຣະພິໂລດອັນຮ້າຍກາດຂອງພຣະອົງລົງແລ້ວ
ແລະໄດ້ຈູດໄຟຂຶ້ນໃນເມືອງຊີໂອນຊຶ່ງເຜົາຜານຮາກຂອງເມືອງນັ້ນ
12 ກະສັດທັງປວງຂອງແຜ່ນດິນໂລກ ແລະບັນດາຊາວໂລກພາກັນບໍ່ເຊື່ອວ່າຄູ່ແຂ່ງ
ຫລືສັດຕູຈະໄດ້ເຂົ້າໄປໃນປະຕູເມືອງເຢຣູຊາເລັມໄດ້
13 ເພາະວ່າຄວາມຜິດບາບຂອງພວກຜູ້ທໍານວາຍຂອງເມືອງຊີໂອນ
ແລະຍ້ອນຄວາມຊົ່ວຊ້າຂອງພວກປະໂລຫິດຂອງເມືອງນັ້ນ
ທີ່ໄດ້ເຮັດໃຫ້ເລືອດຂອງຄົນຊອບທໍາໄຫລອອກໃນທ່າມກາງເມືອງ

[14] ພວກເຂົາທັງຫລາຍຍ່າງເປະປະ ແລະຕາບອດໄປຕາມຖະໜົນ
ເຮັດຕົວໃຫ້ມີມົນທິນດ້ວຍເລືອດ ຈົນຄົນຈະຈັບຕ້ອງເສື້ອຜ້າຂອງເຂົາກໍບໍ່ໄດ້
[15] ຄົນທັງຫລາຍຮ້ອງບອກພວກເຂົາວ່າ “ຈົ່ງໜີໄປ ຄົນທີ່ເປັນມົນທິນ
ຈົ່ງໜີໄປສາ ໜີໄປສາ ຢ່າມາຊູນຂ້ອຍ”
ເມື່ອພວກເຂົາເຫລົ່ານັ້ນໜີໄປ ເປັນຄົນພະເນຈອນ
ພົນລະເມືອງຂອງປະຊາຊາດເວົ້າກັນວ່າ “ພວກເຂົາຕ້ອງບໍ່ຢູ່ໃນບ່ອນນີ້ອີກຕໍ່ໄປ”
[16] ພຣະຜູ້ເປັນເຈົ້າເອງເຮັດໃຫ້ພວກເຂົາກະຈັດກະຈາຍໄປ
ພຣະອົງຈະບໍ່ສົນພຣະໄທພວກເຂົາອີກເລີຍ
ຄົນທັງຫລາຍຈຶ່ງບໍ່ນັບຖືພວກປະໂລຫິດ ບໍ່ເຮັດດີຕໍ່ພວກຜູ້ໃຫຍ່
[17] ໜ່ວຍຕາຂອງພວກເຮົາຊອກຫາຄວາມຊ່ວຍເຫລືອ ການຊ່ວຍເຫລືອນັ້ນບໍ່ມີປະໂຫຍດ
ສ່ວນການຄອຍຖ້າ ພວກເຮົາໄດ້ຄອຍຖ້າປະເທດທີ່ຊ່ວຍເຮົາໃຫ້ລອດພົ້ນບໍ່ໄດ້
[18] ມີຄົນສະກົດຮອຍຕາມເຮົາ ຈົນພວກເຮົາຍ່າງຕາມຖະໜົນໃນເມືອງຂອງພວກເຮົາບໍ່ໄດ້
ເວລາສຸດທ້າຍຂອງພວກເຮົາກໍໃກ້ເຂົ້າມາແລ້ວ
ວັນເດືອນປີທັງຫລາຍຂອງພວກເຮົາກໍຈະໝົດຢູ່ແລ້ວ
ເພາະວ່າເວລາສຸດທ້າຍຂອງພວກເຮົາມາເຖິງແລ້ວ
[19] ພວກທີ່ໄລ່ຂົ່ມເຫັງເຮົາກໍໄວກວ່ານົກອິນຊີໃນທ້ອງຟ້າ
ພວກເຂົາແລ່ນໄລ່ພວກເຮົາເທິງພູເຂົາ
ພວກເຂົາດັກຊຸ້ມຄອຍຖ້າຈັບເຮົາໃນຖິ່ນແຫ້ງແລ້ງກັນດານ
[20] ເຈົ້າຊີວິດຂອງພວກຂ້ານ້ອຍ ຄືຜູ້ທີ່ພຣະຜູ້ເປັນເຈົ້າເຈີມໄວ້ນັ້ນ
ກໍຕົກໃນຂຸມລວງຂອງພວກເຂົາທັງຫລາຍແລ້ວ
ຄືພວກເຮົາກ່າວເຖິງພະອົງວ່າ “ເຮົາຈະດຳລົງຊີວິດຂອງເຮົາທ່າມກາງປະຊາຊາດໄດ້
ກໍດ້ວຍອາໄສຮົ່ມເງົາຂອງພະອົງ”
[21] ໂອ ລູກສາວຂອງເມືອງເອໂດມທີ່ອາໄສຢູ່ໃນປະເທດອູເຊ
ຈົ່ງຊົມຊື່ນຍິນດີ ແລະຍິນດີເຖີດ ຂັນໜ່ວຍນັ້ນຈະສົ່ງຜ່ານມາເຖິງເຈົ້າ
ເຈົ້າຈະຕ້ອງເມົາ ແລະຈະຕ້ອງແກ້ຜ້າເປືອຍກາຍ
[22] ໂອ ລູກສາວຂອງເມືອງຊີໂອນເອີຍ
ການລົງໂທດເພາະຄວາມຊົ່ວຊ້າຂອງເຈົ້າກໍຄົບແລ້ວ
ພຣະອົງຈະບໍ່ພາເຈົ້າອອກໄປໃຫ້ເປັນຊະເລີຍອີກ
ໂອ ລູກສາວຂອງເມືອງເອໂດມເອີຍ
ພຣະອົງຈະລົງໂທດເພາະຄວາມຊົ່ວຊ້າຂອງເຈົ້າ
ພຣະອົງຈະເປີດເຜີຍຄວາມບາບຂອງເຈົ້າໃຫ້ປະຈັກແຈ້ງ

# ບົດທີ 5

## ເພງຄ່ຳຄວນບົດທີຫ້າ

1 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍລະນຶກເຖິງວ່າມີອັນໃດຕົກເຖິງຂ້ານ້ອຍ
ຂໍພິຈາລະນາ ແລະທອດພຣະເນດຄວາມອັບ
ອາຍຂາຍໜ້າຂອງຂ້ານ້ອຍ
2 ມໍລະດົກຂອງພວກຂ້ານ້ອຍໄດ້ໄປຕົກຢູ່ກັບພວກຕ່າງປະເທດ
ບ້ານເຮືອນຂອງພວກຂ້ານ້ອຍເປັນຂອງຄົນຕ່າງດ້າວ
3 ພວກຂ້ານ້ອຍເປັນຄົນກຳພ້າພໍ່
ແລະພວກແມ່ຂອງຂ້ານ້ອຍເປັນດັ່ງແມ່ໝ້າຍ
4 ພວກຂ້ານ້ອຍຕ້ອງຊື້ນ້ຳດື່ມ
ແລະຟືນກໍຕ້ອງໄດ້ຊື້ເຂົາໃຊ້
5 ຜູ້ຂົ່ມເຫັງໄດ້ຂີ່ຄໍພວກຂ້ານ້ອຍໄວ້
ພວກຂ້ານ້ອຍເຮັດວຽກໜັກດ້ວຍຄວາມອ່ອນເພຍ ແລະບໍ່ມີເວລາພັກເລີຍ
6 ພວກຂ້ານ້ອຍຍໍມືໃຫ້ຄົນ ເອຢິບ
ແລະຄົນ ອັດຊີເຣຍ ເພື່ອຈະໄດ້ອາຫານກິນອີ່ມ
7 ບັນພະບູລຸດຂອງພວກຂ້ານ້ອຍໄດ້ເຮັດບາບ ແລະກໍຕາຍໝົດແລ້ວ
ພວກຂ້ານ້ອຍຕ້ອງຖືກໂທດເພາະຄວາມບາບຂອງເຂົາ
8 ຂ້າທາດກັບເປັນຜູ້ປົກຄອງພວກຂ້ານ້ອຍ
ບໍ່ມີຜູ້ໃດຊ່ວຍຂ້ານ້ອຍໃຫ້ພົ້ນມືຂອງພວກເຂົາໄດ້
9 ຂ້ານ້ອຍທັງຫລາຍໄດ້ອາຫານມາໂດຍເອົາຊີວິດເຂົ້າສ່ຽງ
ເພາະດາບຂອງຖິ່ນແຫ້ງແລ້ງກັນດານ
10 ຜິວໜັງຂອງພວກຂ້ານ້ອຍກໍຮ້ອນປານເຕົາອົບ
ຍ້ອນຄວາມເດືອດຮ້ອນເຫລືອເກີນ
11 ພວກເຂົາຂືນໃຈພວກຜູ້ຍິງໃນເມືອງຊີໂອນ
ແລະຂົ່ມໃຈສາວປອດໃນທົ່ວເມືອງຂອງຢູດາ
12 ພວກເຈົ້ານາຍຕ້ອງຖືກແຂວນຄໍ
ບໍ່ມີໃຜສະແດງຄວາມນັບຖືຕໍ່ໜ້າພວກຜູ້ໃຫຍ່
13 ພວກຄົນໜຸ່ມຖືກບັງຄັບໃຫ້ໂມ້ແປ້ງ
ແລະພວກເດັກນ້ອຍຕ້ອງແບກຟືນໜັກລົ້ມລຸກຄຸກຄານ
14 ພວກຜູ້ໃຫຍ່ຫາຍຕົວໄປຈາກປະຕູເມືອງ
ພວກຄົນໜຸ່ມໄດ້ຢຸດເສບດົນຕີແລ້ວ
15 ຄວາມຊົມຊື່ນຍິນດີກໍຫາຍໄປຈາກໃຈຂອງພວກຂ້ານ້ອຍໝົດ
ການເຕັ້ນລຳຂອງພວກຂ້ານ້ອຍກາຍເປັນການຮ້ອງໄຫ້

16 ມົງກຸດໄດ້ຕົກລົງຈາກຫົວຂ້ານ້ອຍແລ້ວ
ວິບັດແກ່ພວກຂ້ານ້ອຍ ຍ້ອນພວກຂ້ານ້ອຍເຮັດບາບໄວ້
17 ເຫດນີ້ເອງໃຈພວກຂ້ານ້ອຍຈຶ່ງເຈັບປວດ
ຍ້ອນການເຫລົ່ານີ້ເອງໜ່ວຍຕາຂ້ານ້ອຍຈຶ່ງມົວໄປ
18 ເນື່ອງດ້ວຍພູເຂົາຊີໂອນຊຶ່ງເກີດຮ້າງເປົ່າ
ພວກໝາຈິ້ງຈອກມາຍ່າງທຽວໄປທຽວມາຢູ່ເທິງນັ້ນ
19 ຂ້າແດ່ພຣະຜູ້ເປັນເຈົ້າ ແຕ່ພຣະອົງຊົງຄອບຄອງຢູ່ເປັນນິດ
ພຣະທີ່ນັ່ງຂອງພຣະອົງດຳລົງຢູ່ທຸກຊົ່ວອາຍຸ
20 ເປັນຍ້ອນເຫດໃດພຣະອົງຈຶ່ງຊົງລືມພວກຂ້ານ້ອຍເປັນນິດ
ເປັນຍ້ອນເຫດໃດຈຶ່ງໄດ້ປະຖິ້ມພວກຂ້ານ້ອຍດົນນານດັ່ງນີ້
21 ຂ້າແດ່ພຣະຜູ້ເປັນເຈົ້າຂໍຊ່ວຍຂ້ານ້ອຍໃຫ້ກັບສູ່ພຣະອົງເຖີດ
ແລ້ວພວກຂ້ານ້ອຍຈະກັບສູ່ພຣະອົງ ຂໍຟື້ນວັນເດືອນປີຂອງຂ້ານ້ອຍໃຫ້ຄືແຕ່ກ່ອນ
22 ເວັ້ນແຕ່ພຣະອົງຈະຊົງປະຖິ້ມພວກຂ້ານ້ອຍແລ້ວ
ແລະພຣະອົງຊົງໂກດຮ້າຍພວກຂ້ານ້ອຍຢ່າງລົ້ນຫລາຍ

* * *

# ເອເຊກີເອນ

## ບົດທີ 1

### ເອເຊກີເອນເຫັນພຣະລາຊະບັນລັງ
### ຂອງພຣະເຈົ້າທາງນິມິດ

1ເມື່ອວັນທີຫ້າ ເດືອນສີ່ປີທີສາມສິບ ຂະນະທີ່ຂ້າພະເຈົ້າຢູ່ກັບພວກຊະເລີຍຊາວຢູດາທີ່ແມ່-
ນ້ຳເກບາໃນປະເທດບາບີໂລນ ທ້ອງຟ້າໄດ້ຍະອອກ ແລ້ວຂ້າພະເຈົ້າກໍເຫັນພຣະເຈົ້າທາງນິ-
ມິດ. 2ໃນເວລານັ້ນ ພໍດີກົງກັນກັບເວລາທີ່ກະສັດເຢໂຮຍາກິນຖືກຈັບໄປເປັນຊະເລີຍໄດ້ຫ້າປີ.
3ພຣະຜູ້ເປັນເຈົ້າຊົງກ່າວກັບຂ້າພະເຈົ້າຄື ເອເຊກີເອນລູກຊາຍຂອງປະໂລຫິດບູຊີຢູ່ແຄມແມ່-
ນ້ຳເກບາໃນປະເທດບາບີໂລນ ໃນທີ່ນັ້ນ ລິດທານຸພາບຂອງພຣະອົງໄດ້ຖືກຕ້ອງຕົວຂ້າພະ-
ເຈົ້າ.

4ຂ້າພະເຈົ້າໄດ້ເງີຍໜ້າຂຶ້ນ ແລ້ວເຫັນລົມພະຍຸພັດມາແຕ່ທາງເໜືອ ມີແສງສະຫວ່າງສ່ອງ
ຮຸ່ງເຮືອງອອກມາຈາກເມກກ້ອນໃຫຍ່ ແລະທ້ອງຟ້າກໍລຸກເປັນໄຟອ້ອມຮອບເມກນັ້ນ ຢູ່ທີ່ນັ້ນ
ແສງສະຫວ່າງສ່ອງແສງເຫລື້ອມເໝືອນທອງສຳລິດ. 5ໃນທ່າມກາງພະຍຸນັ້ນ ຂ້າພະເຈົ້າໄດ້ເຫັນ
ສິ່ງໜຶ່ງເໝືອນສັດສີ່ໂຕ. 6ມັນມີຮູບຮ່າງເໝືອນມະນຸດ ແຕ່ລະໂຕມີສີ່ໜ້າ ແລະສີ່ປີກ. 7ຂາຂອງ
ມັນຊື່ ແຕ່ຕີນຂອງມັນມີເລັບເໝືອນເລັບງົວ ສັດທັງສີ່ນັ້ນມີແສງເຫລື້ອມເໝືອນທອງສຳລິດ. 8ຢູ່
ລຸ່ມປີກທັງສີ່ຂອງມັນ ຍັງມີມືສີ່ມືເໝືອນມືມະນຸດ. 9ປີກທັງສອງຂອງແຕ່ລະໂຕ ໄດ້ພືອອກໄປຈຸ
ກັນກັບປີກສັດໂຕອື່ນເປັນຮູບສີ່ຫລ່ຽມ ແລ້ວບິນໄປທາງດຽວກັນໂດຍບໍ່ຫັນເຫໄປຕ່າງທິດທາງ
ກັນ.

10ໜ້າທັງສີ່ຂອງສັດແຕ່ລະໂຕບໍ່ຄືກັນ ຄືໜ້າຢູ່ຂ້າງໜ້າເໝືອນມະນຸດ ໜ້າຂ້າງຂວາເໝືອນ
ໜ້າສິງ ໜ້າຂ້າງຊ້າຍເໝືອນໜ້າງົວ ແລະໜ້າຂ້າງຫລັງເໝືອນໜ້ານົກອິນທີ. 11ປີກທັງສອງ
ຂອງສັດແຕ່ລະໂຕພືອອກ ໄປຈຸກັບປາຍປີກຂອງໂຕອື່ນ ແລະອີກປີກສອງປີກໄດ້ປົກຫຸ້ມໂຕມັນ
ໄວ້. 12ສັດທຸກໂຕໄດ້ປິ່ນໜ້າໄປສູ່ທິດທັງສີ່ ເມື່ອມັນປະສົງຈະໄປທາງໃດ ກໍບິນໄປພ້ອມກັນ ບໍ່
ປິ່ນໜ້າໄປທາງອື່ນເລີຍ. 13ຢູ່ໃນສັດເຫລົ່ານັ້ນ ມີສິ່ງໜຶ່ງເບິ່ງຄ້າຍຄືໂຄມໄຟ ເຄື່ອນໄຫວຢູ່ເປັນ-
ນິດ. 14ເປັນໄຟສຸກໃສ ແລະມີແສງຟ້າແມບເຫລື້ອມ ສັດເຫລົ່ານັ້ນພຸ່ງໄປມາເໝືອນຟ້າແມບ
ເຫລື້ອມ.

15ຂະນະທີ່ຂ້າພະເຈົ້າຫລຽວເບິ່ງສັດສີ່ໂຕນັ້ນ ຂ້າພະເຈົ້າໄດ້ເຫັນກົງລໍ້ສີ່ອັນຢູ່ເທິງດິນແປະຢູ່
ຂ້າງສັດແຕ່ລະໂຕ. 16ລໍ້ແຕ່ລະອັນສ່ອງແສງເໝືອນເພັດເບິ່ງຄືກັນໝົດທັງສີ່ລໍ້ ແຕ່ລະລໍ້ມີລໍ້ອີກ
ອັນໜຶ່ງຕັດຜ່ານທາງກາງ ເພື່ອວ່າພວກມັນຈະຍ້າຍໄປໄດ້ໃນທຸກທິດທຸກທາງ. 17-18ແລະລໍ້ນັ້ນ
ໃຫຍ່ເປັນຕາຢ້ານ ມີໜ່ວຍຕາຕິດຢູ່ອ້ອມຮອບ.

19ເມື່ອໃດສັດເຫລົ່ານັ້ນຍ້າຍໄປ ລໍ້ກໍຍ້າຍໄປນຳ ເມື່ອສັດນັ້ນເຫາະຂຶ້ນຈາກພື້ນດິນ ລໍ້ກໍເຫາະ
ຂຶ້ນນຳ. 20ເມື່ອສັດເຫລົ່ານັ້ນໄປທີ່ໃດ ລໍ້ກໍໄປນຳທັນທີ ເພາະວ່າສັດເປັນຜູ້ຄວບຄຸມລໍ້. 21ທຸກໆ

ເວລາທີ່ສັດນັ້ນເຄື່ອນຍ້າຍໄປ ເມື່ອຢຸດເຊົາ ຫລືເຫາະຂຶ້ນເທິງອາກາດ ລໍ້ກໍເຄື່ອນຍ້າຍໄປນຳທັນທີ.

[22]ຢູ່ເທິງຫົວຂອງສັດມີສິ່ງໜຶ່ງເບິ່ງຄ້າຍຄືຍອດຊໍ່ຟ້າແກ້ວຜະລຶກສີສຸກໃສຢູ່ລຸ່ມຍອດຊໍ່ຟ້ານັ້ນ.
[23]ສັດແຕ່ລະໂຕໄດ້ພືສອງປີກອອກໄປຈຸກັບປາຍປີກໂຕອື່ນ ແຕ່ອີກສອງປີກໄດ້ປົກຫຸ້ມໂຕມັນໄວ້.
[24]ເມື່ອສັດເຫລົ່ານີ້ບິນໄປ ຂ້າພະເຈົ້າໄດ້ຍິນສຽງປີກຂອງມັນດັ່ງເໝືອນສຽງຄື້ນທະເລ ເໝືອນສຽງກອງທັບໃຫຍ່ເດີນໄປ ແລະເໝືອນພຣະສຸລະສຽງຂອງພຣະເຈົ້າຜູ້ມີອຳນາດຍິ່ງໃຫຍ່ ເມື່ອພວກມັນເຊົາບິນມັນກໍຫຸບປີກໄວ້.

[25]ແຕ່ຍັງມີສຽງອີກສຽງໜຶ່ງດັງມາຈາກຍອດຊໍ່ຟ້າເໜືອຫົວຂອງສັດນັ້ນ. [26]ຢູ່ເທິງຍອດຊໍ່ຟ້າ ມີສິ່ງໜຶ່ງເບິ່ງຄ້າຍຄືບັນລັງແກ້ວນິລະກົດ ແລະມີຮູບຮ່າງອັນໜຶ່ງເບິ່ງຄືມະນຸດນັ່ງຢູ່ເທິງບັນລັງ.
[27]ເທິງແອວຂອງຮູບຮ່າງນັ້ນສ່ອງແສງເຫລື້ອມເໝືອນທອງສຳລິດຢູ່ໃນກາງກອງໄຟ ແລະລຸ່ມແອວລົງມາມັນສ່ອງແສງເຫລື້ອມເໝືອນໄຟໄປທົ່ວທຸກແຫ່ງ. [28]ແສງສະຫວ່າງນີ້ ສ່ອງແສງເໝືອນຮຸ້ງກິນນໍ້າຢູ່ເທິງເມກ.

# ບົດທີ 2

## ພຣະລັດສະໝີຄວາມຍິ່ງໃຫຍ່ຂອງພຣະຜູ້ເປັນເຈົ້າເປັນດັ່ງນີ້ແຫລະ ພຣະເຈົ້າຊົງແຕ່ງຕັ້ງເອເຊກີເອນເປັນຜູ້ປະກາດພຣະທຳ

[1]ເມື່ອຂ້າພະເຈົ້າໄດ້ເຫັນດັ່ງນັ້ນ ກໍໝູບໜ້າລົງດິນ ແລ້ວໄດ້ຍິນສຽງຜູ້ໜຶ່ງເວົ້າວ່າ "ມະນຸດເອີຍ ຈົ່ງຢືນຂຶ້ນເຮົາຕ້ອງການເວົ້ານຳເຈົ້າ." [2]ຂະນະທີ່ຜູ້ນັ້ນພວມເວົ້າຢູ່ ພຣະວິນຍານຂອງພຣະເຈົ້າໄດ້ສວມທັບຂ້າພະເຈົ້າ ແລະເຮັດໃຫ້ຢືນຂຶ້ນ.

[3]ແລ້ວຂ້າພະເຈົ້າໄດ້ຍິນສຽງດັ່ງຕໍ່ໄປນີ້ວ່າ "ມະນຸດເອີຍ ເຮົາຈະສົ່ງເຈົ້າໄປຫາພວກອິສຣາ-ເອນ ຜູ້ເປັນກະບົດຕໍ່ສູ້ເຮົາ ພວກເຂົາຍັງເປັນກະບົດເຊັ່ນດຽວກັບບັນພະບູລຸດຂອງເຂົາເຈົ້າເທົ່າທຸກມື້ນີ້. [4]ພວກເຂົາເປັນຄົນຫົວດື້ ແລະບໍ່ເຄົາລົບນັບຖືເຮົາ ເຮົາຈະສົ່ງເຈົ້າໄປບອກສິ່ງທີ່ເຮົາຈະເວົ້າກັບເຂົາ. [5]ພວກເຂົາຈະຟັງ ຫລືບໍ່ຟັງກໍຕາມ ແຕ່ພວກເຂົາກໍຈະຮູ້ວ່າ ມີຜູ້ປະກາດພຣະທຳຄົນໜຶ່ງຢູ່ທ່າມກາງພວກເຂົາ. [6]ແຕ່ເຈົ້າຜູ້ເປັນມະນຸດເອີຍ ຢ່າຢ້ານພວກເຂົາ ຫລືຢ້ານສິ່ງທີ່ເຂົາເວົ້າ ເຖິງແມ່ນວ່າພວກເຂົາຈະເປັນເໝືອນໜາມປິດລ້ອມເຈົ້າ ແລະເປັນເໝືອນແມງງອດຢູ່ອ້ອມຮອບເຈົ້າ ກໍຢ່າຢ້ານພວກກະບົດເຫລົ່ານັ້ນ ຫລືຢ້ານຄຳເວົ້າຂອງພວກເຂົາເລີຍ. [7]ຈົ່ງບອກພວກເຂົາສິ່ງທີ່ເຮົາບອກເຈົ້າ ພວກເຂົາຈະຟັງຫລືບໍ່ຟັງກໍຕາມ ເພາະວ່າພວກເຂົາເປັນຝ່າຍກະບົດ.
[8]ມະນຸດເອີຍ ຈົ່ງຟັງສິ່ງທີ່ເຮົາບອກ ຢ່າເປັນກະບົດເໝືອນກັບພວກເຂົາ ຈົ່ງອ້າປາກແລ້ວກິນສິ່ງທີ່ເຮົາຈະໃຫ້ເຈົ້ານີ້".

[9]ຕໍ່ມາ ຂ້າພະເຈົ້າໄດ້ເຫັນມືເບື້ອງໜຶ່ງຖືໜັງສືມ້ວນຢຽດອອກມາທາງຂ້າພະເຈົ້າ. [10]ມືນັ້ນໄດ້ພືໜັງສືມ້ວນ ແລ້ວຂ້າພະເຈົ້າກໍໄດ້ເຫັນຄຳຂຽນໄວ້ທັງສອງໜ້າ ແລະອ່ານໄດ້ຄວາມວ່າ, "ຮ້ອງ-ໄຫ້ອາໄລຫາ ຮ້ອງຄາງ."

# ບົດທີ 3

[1]ພຣະເຈົ້າຊົງກ່າວຕໍ່ໄປວ່າ, "ມະນຸດເອີຍ ຈົ່ງກິນໜັງສືມ້ວນນີ້ແລ້ວໄປເວົ້າກັບປະຊາຊົນອິ-
ສຣາເອນ." [2]ດັ່ງນັ້ນ ຂ້າພະເຈົ້າຈຶ່ງໄດ້ອ້າປາກກິນໜັງສືມ້ວນທີ່ພຣະອົງຊົງຍື່ນໃຫ້.
[3]ພຣະອົງຊົງກ່າວອີກວ່າ, "ມະນຸດເອີຍ ຈົ່ງກິນໜັງສືມ້ວນທີ່ເຮົາໃຫ້ເຈົ້ານັ້ນໃຫ້ອີ່ມ" ຂ້າພະ-
ເຈົ້າກໍກິນໜັງສືມ້ວນນັ້ນ ມັນມີລົດຫວານເໝືອນນໍ້າເຜິ້ງ.
[4]ຕໍ່ມາພຣະເຈົ້າຊົງກ່າວວ່າ, "ມະນຸດເອີຍ ຈົ່ງໄປບອກສິ່ງທີ່ເຮົາບອກເຈົ້າແກ່ປະຊາຊົນອິ-
ສຣາເອນ. [5]ເຮົາຈະບໍ່ສົ່ງເຈົ້າໄປຫາຊົນຊາດທີ່ເວົ້າພາສາຕ່າງປະເທດແລະພາສາທີ່ຍາກ ແຕ່ຈະ
ສົ່ງໄປຫາພວກອິສຣາເອນ. [6]ຖ້າສົ່ງໄປຫາປະເທດໃຫຍ່ຊຶ່ງເວົ້າພາສາທີ່ຍາກ ໂດຍທີ່ເຈົ້າບໍ່ເຂົ້າ-
ໃຈ ຊົນຊາດນັ້ນອາດຟັງເຈົ້າຢູ່. [7]ແຕ່ຈະບໍ່ມີປະຊາຊົນອິສຣາເອນຄົນໃດມີນໍ້າໃຈຢາກຟັງເຈົ້າ
ແມ່ນແຕ່ເຮົາ ເຂົາກໍຈະບໍ່ຟັງຄືກັນ ເພາະວ່າພວກເຂົາເປັນຄົນຫົວດື້ ແລະໃຈແຂງ.
[8]ບັດນີ້ ເຮົາຈະເຮັດໃຫ້ເຈົ້າເປັນຄົນຫົວດື້ ແລະໃຈແຂງເໝືອນພວກເຂົາ. [9]ຈະເຮັດໃຫ້ແຂງ
ກວ່າຫີນ ແລະເພັດ ສະນັ້ນ ເຈົ້າຢ່າຢ້ານ ພວກກະບົດເຫລົ່ານີ້ເລີຍ."
[10]ພຣະເຈົ້າຊົງກ່າວຕໍ່ໄປວ່າ, "ມະນຸດເອີຍ ຈົ່ງຈົດຈຳແລະເອົາໃຈໃສ່ຢ່າງແທ້ຈິງ ໃນສິ່ງທີ່
ເຮົາໄດ້ບອກນັ້ນ. [11]ແລ້ວໃຫ້ໄປຫາຊົນຊາດຂອງເຈົ້າທີ່ຕົກເປັນຊະເລີຍ ແລະໃຫ້ບອກເຂົາເຖິງ
ສິ່ງທີ່ເຮົາຈະບອກເຈົ້າ ເຖິງພວກເຂົາຈະຟັງຫລືບໍ່ຟັງກໍຕາມ."
[12]ຕໍ່ມາພຣະວິນຍານຂອງພຣະເຈົ້າໄດ້ຍົກຂ້າພະເຈົ້າຂຶ້ນ ແລ້ວມີສຽງໜຶ່ງດັງກ້ອງອອກມາ
ເໝືອນສຽງແຜ່ນດິນໄຫວ ຢູ່ທາງຫລັງຂ້າພະເຈົ້າ ສຽງນັ້ນມີເນື້ອຄວາມວ່າ, "ຈົ່ງສັນລະເສີນ
ພຣະລັດສະໝີຄວາມຍິ່ງໃຫຍ່ ຂອງພຣະຜູ້ເປັນເຈົ້າອົງສະຖິດຢູ່ເທິງສະຫວັນ" [13]ຂ້າພະເຈົ້າໄດ້
ຍິນສຽງປີກສັດດັງໃນອາກາດ ແລະສຽງລໍ້ດັງກ້ອງເໝືອນສຽງແຜ່ນດິນໄຫວ ຂະນະພະວິຍານ
ຂອງພຣະເຈົ້າຊົງຍົກຂ້າພະເຈົ້າຂຶ້ນນັ້ນ. [14]ຂະນະທີ່ພຣະວິນຍານຂອງພຣະເຈົ້າຊົງຍົກຂ້າພະ-
ເຈົ້າຂຶ້ນນັ້ນ ຂ້າພະເຈົ້າຮູ້ສຶກຂົມຂື່ນ ແລະຄຽດແຄ້ນ ເພາະວ່າລິດທານຸພາບຂອງພຣະອົງໄດ້ຊົງ
ບັງຄັບຢູ່. [15]ຂ້າພະເຈົ້າໄດ້ໄປເຖິງບ່ອນພວກຊະເລີຍອາໄສຢູ່ທີ່ເມືອງເຕນ-ອາບີບ ແຄມແມ່ນໍ້າ
ເກບາທີ່ປະເທດບາບີໂລນ ແລະໄດ້ພັກຢູ່ທີ່ນັ້ນດ້ວຍຄວາມຕົກຕະລຶງເປັນເວລາເຈັດມື້.

## ພຣະເຈົ້າຊົງແຕ່ງຕັ້ງເອເຊກີເອນເປັນຄົນຍາມຊາວອິສຣາເອນ

[16-17]ເມື່ອຄົບເຈັດມື້ແລ້ວ ພຣະຜູ້ເປັນເຈົ້າຊົງກ່າວຕໍ່ຂ້າພະເຈົ້າວ່າ, "ມະນຸດເອີຍ ເຮົາຈະ
ແຕ່ງຕັ້ງເຈົ້າໃຫ້ເປັນຄົນຍາມຊົນຊາດອິສຣາເອນ ຈົ່ງຕັກເຕືອນພວກເຂົາດ້ວຍຖ້ອຍຄຳທີ່ເຮົາໄດ້
ບອກເຈົ້າ. [18]ຖ້າເຮົາປະກາດວ່າ ຄົນຊົ່ວຜູ້ໜຶ່ງຈະຕ້ອງຕາຍ ແຕ່ຖ້າເຈົ້າບໍ່ຕັກເຕືອນໃຫ້ລາວປ່ຽນ
ທາງເພື່ອຊ່ອຍຊີວິດລາວໄວ້ ຄົນຊົ່ວຜູ້ນັ້ນກໍຈະຕາຍເສຍຍ້ອນບາບຂອງຕົນເອງ ແລ້ວເຮົາຈະຖື
ວ່າການຕາຍຂອງຜູ້ນັ້ນເປັນຄວາມຜິດຂອງເຈົ້າ. [19]ຖ້າວ່າເຈົ້າໄດ້ຕັກເຕືອນຄົນຊົ່ວຮ້າຍແລ້ວ
ແຕ່ລາວບໍ່ເຊົາເຮັດບາບ ລາວກໍຈະຕາຍຍ້ອນບາບນັ້ນ ແຕ່ຊີວິດຂອງເຈົ້າຈະປອດໄພ.
[20]ຖ້າຄົນດີມີສິນທຳຜູ້ໜຶ່ງເລີ່ມຕົ້ນເຮັດບາບ ເຮົາຈະເຮັດໃຫ້ລາວຕົກຢູ່ໃນອັນຕະລາຍ ແລະ
ຖ້າເຈົ້າບໍ່ເຕືອນລາວ ລາວກໍຈະຕາຍຍ້ອນການເຮັດບາບນັ້ນ ເຮົາຈະບໍ່ລະນຶກເຖິງຄຸນງາມ-
ຄວາມດີທີ່ລາວໄດ້ເຮັດມາ ແຕ່ຈະຖືວ່າ ເປັນຄວາມຜິດຂອງເຈົ້າ. [21]ຖ້າເຈົ້າຫາກຕັກເຕືອນບໍ່ໃຫ້

ລາວເຮັດບາບ ລາວກໍຈະເຊື່ອຟັງບໍ່ເຮັດບາບນັ້ນ ຊີວິດຂອງເຈົ້າ ແລະຊີວິດຂອງລາວກໍຈະປອດ
ໄພ.”

## ເອເຊກີເອນປາກບໍ່ໄດ້

[22]ເມື່ອຕົກຢູ່ໃນອຳນາດຂອງພຣະຜູ້ເປັນເຈົ້ານັ້ນ ຂ້າພະເຈົ້າໄດ້ຍິນພຣະອົງຊົງກ່າວວ່າ, “ຈົ່ງ
ລຸກຂຶ້ນ ແລ້ວອອກໄປຍັງຮ່ອມພູ ເຮົາຈະເວົ້າກັບເຈົ້າຢູ່ທີ່ນັ້ນ.” [23]ດັ່ງນັ້ນ ຂ້າພະເຈົ້າຈຶ່ງອອກໄປ
ໃນທີ່ນັ້ນ ຂ້າພະເຈົ້າໄດ້ເຫັນພຣະລັດສະໝີຄວາມຍິ່ງໃຫຍ່ຂອງພຣະຜູ້ເປັນເຈົ້າ ເປັນຢ່າງດຽວ
ກັນກັບຄາວທີ່ເຫັນຢູ່ແຄມແມ່ນ້ຳເກບາ ແລະຂ້າພະເຈົ້າໄດ້ໝູບໜ້າລົງດິນ.
[24]ແຕ່ພຣະວິນຍານໄດ້ສະເດັດເຂົ້າສິງໃນຕົວຂ້າພະເຈົ້າແລະເຮັດໃຫ້ຢືນຂຶ້ນ ພຣະວິນຍານ
ນັ້ນຊົງບອກຂ້າພະເຈົ້າວ່າ, “ຫລົບເມືອບ້ານສາ ແລ້ວລີ້ຢູ່ໃນເຮືອນ. [25]ມະນຸດເອີຍ ເຈົ້າຈະຖືກ
ມັດດ້ວຍເຊືອກໄປໃສບໍ່ໄດ້. [26]ແລະເຮົາຈະເຮັດໃຫ້ລີ້ນຂອງເຈົ້າແຂງຈົນປາກບໍ່ໄດ ເພື່ອບໍ່ໃຫ້
ຕັກເຕືອນພວກກະບົດເຫລົ່ານັ້ນໄດ້ [27]ເມື່ອເຮົາເວົ້າກັບເຈົ້າອີກ ເຮົາຈຶ່ງຈະໃຫ້ເຈົ້າເວົ້າໄດ້ ແລ້ວ
ເຈົ້າຈຶ່ງບອກພວກເຂົາວ່າ, ພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ “ພວກເຂົາບາງຄົນຈະເຊື່ອຟັງເຮົາ
ແຕ່ບາງຄົນຈະບໍ່ເຊື່ອຟັງເຮົາ ເພາະວ່າພວກເຂົາເປັນຊົນຊາດກະບົດ.”

# ບົດທີ 4

## ໝາຍສຳຄັນແຫ່ງການອ້ອມເມືອງເຢຣູຊາເລັມໄວ້

[1]“ບຸດມະນຸດເອີຍ ເຈົ້າຈົ່ງເອົາກ້ອນດິນຈີ່ມາວາງໄວ້ຕໍ່ໜ້າເຈົ້າ ແລະແກະຮູບເມືອງໜຶ່ງໄວ້ເທິງ
ນັ້ນຄືເມືອງເຢຣູຊາເລັມ [2]ຈົ່ງອ້ອມເມືອງນັ້ນໄວ້ ແລະກໍ່ກຳແພງອ້ອມໄວ້ຮອບເມືອງນັ້ນດ້ວຍ ກໍ່
ກອງດິນໄວ້ສູ້ເມືອງນັ້ນ ແລະຕັ້ງຄ້າຍອ້ອມເມືອງໄວ້ ຕັ້ງເຄື່ອງທຳລາຍກຳແພງໄວ້ຮອບເມືອງ
[3]ຈົ່ງຫາແຜ່ນເຫລັກມາ ແລະວາງແຜ່ນເຫລັກນັ້ນເປັນກຳແພງເຫລັກລະຫວ່າງເຈົ້າກັບເມືອງນັ້ນ
ແລະເຈົ້າຈົ່ງຫັນໜ້າສູ່ເມືອງນັ້ນ ໃຫ້ເມືອງນັ້ນຖືກອ້ອມ ແລ້ວເຈົ້າຈົ່ງສັ່ງການອ້ອມເຂົ້າໄປ ນີ້
ເປັນໝາຍສຳຄັນສຳລັບເຊື້ອສາຍອິສຣາເອນ
[4]ແລ້ວເຈົ້າຈົ່ງນອນສະແຄງເບື້ອງຊ້າຍ ແລະເຮົາຈະວາງຄວາມຊົ່ວຊ້າແຫ່ງເຊື້ອສາຍອິສຣາ-
ເອນໄວ້ເໜືອເຈົ້າ ເຈົ້ານອນທັບຢູ່ຈັກມື້ ເຈົ້າຈະແບກຄວາມຊົ່ວຊ້າຂອງເມືອງນັ້ນເທົ່ານັ້ນມື້
[5]ເພາະເຮົາໄດ້ກຳນົດມື້ໃຫ້ແກ່ເຈົ້າແລ້ວ ຄືສາມຮ້ອຍເກົ້າສິບມື້ເທົ່າກັບຈຳນວນປີແຫ່ງຄວາມຊົ່ວ-
ຊ້າຂອງພວກເຂົາ ເຈົ້າຈະຕ້ອງແບກຄວາມຊົ່ວຊ້າຂອງເຊື້ອສາຍອິສຣາເອນດົນເທົ່ານັ້ນ
[6]ແລະເມື່ອເຈົ້າເຮັດເຊັ່ນນີ້ຄົບມື້ແລ້ວ ເຈົ້າຈະຕ້ອງນອນລົງເປັນເທື່ອທີສອງ ແຕ່ນອນສະແຄງ
ເບື້ອງຂວາ ແລະເຈົ້າຈະແບກຄວາມຊົ່ວຊ້າຂອງເຊື້ອສາຍຢູດາ ເຮົາກຳນົດໃຫ້ເຈົ້າສີ່ສິບມື້ແທນ
ປີ [7]ແລະເຈົ້າຕ້ອງຕັ້ງໜ້າໃນການປິດລ້ອມເຢຣູຊາເລັມໄວ້ດ້ວຍແຂນເປົ່າ ແລະເຈົ້າຈົ່ງທຳນວຍ
ຕໍ່ສູ້ເມືອງນັ້ນ [8]ແລະເບິ່ງແມ ເຮົາຈະເອົາເຊືອກມັດເຈົ້າໄວ້ ເຈົ້າຈະພິກຈາກຂ້າງນີ້ໄປຂ້າງນັ້ນບໍ່
ໄດ້ຈົນກວ່າເຈົ້າຈະຄົບການປິດລ້ອມເມືອງຕາມກຳນົດມື້ຂອງເຈົ້າ
[9]ເຈົ້າຈົ່ງເອົາເຂົ້າເດືອຍ ເຂົ້າສາລີ ໝາກຖົ່ວ ແລະໝາກຖົ່ວແດງ ເຂົ້າເຟືອງ ແລະເຂົ້າດຳ
ມາໃສ່ໃນໄຫໜ່ວຍດຽວໃຊ້ເຮັດເປັນເຂົ້າຈີ່ໃຫ້ເຈົ້າ ລະຫວ່າງທີ່ເຈົ້ານອນສະແຄງຕາມກຳນົດມື້

ສາມຮ້ອຍເກົ້າສິບມື້ນັ້ນ ເຈົ້າຈະຮັບປະທານອາຫານນີ້ 10ແລະອາຫານທີ່ເຈົ້າຮັບປະທານຈະຕ້ອງ
ຊັ່ງ ເປັນມື້ລະຊາວເຊເຂ ເຈົ້າຈົ່ງຮັບປະທານຕາມເວລາກຳນົດ 11ແລະນ້ຳນັ້ນເຈົ້າຕ້ອງຕອງດື່ມ
ຄືໜຶ່ງໃນຫົກຂອງຈອກໜຶ່ງ ເຈົ້າຈົ່ງດື່ມນ້ຳຕາມເວລາກຳນົດ 12ແລະເຈົ້າຈະຕ້ອງຮັບປະທານ
ເຂົ້າໜົມເຂົ້າສາລີ ໂດຍໃຫ້ໃຊ້ໄຟເຜົາອາຈົມມະນຸດປີ້ງກິນໃນທ່າມກາງສາຍຕາຂອງພວກເຂົາ
ທັງຫລາຍ” 13ແລະ ພຣະຜູ້ເປັນເຈົ້າ ກ່າວວ່າ “ປະຊາຊົນ ອິສຣາເອນ ຈະຕ້ອງຮັບປະທານເຂົ້າຈີ່
ຂອງພວກເຂົາທີ່ເປັນມົນທິນຢ່າງນີ້ແຫລະໃນທ່າມກາງປະຊາຊາດ ທີ່ເຮົາຈະຂັບໄລ່ພວກເຂົາໄປ
ຢູ່”

14ແລ້ວຂ້າພະເຈົ້າຈຶ່ງກ່າວວ່າ “ອົງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ຂ້າ ເບິ່ງແມ ອະນິດຈັງ ຂ້າ-
ພະອົງບໍ່ເຄີຍເຮັດຈິດໃຈຕົວເອງໃຫ້ເປັນມົນທິນເລີຍ ຕັ້ງແຕ່ໜຸ່ມມາຈົນບັດນີ້ ຂ້າພະອົງບໍ່ເຄີຍຮັບ
ປະທານສິ່ງທີ່ຕາຍເອງ ຫລືທີ່ຖືກສັດຈິກກັດຕາຍ ບໍ່ມີຊີ້ນສັດທີ່ເປັນມົນທິນເຂົ້າໄປໃນປາກຂອງ
ຂ້າພະອົງ”

15ແລ້ວພຣະອົງຈຶ່ງກ່າວກັບຂ້າພະເຈົ້າວ່າ “ເບິ່ງແມ ເຮົາຈະຍອມໃຫ້ເຈົ້າໃຊ້ອາຈົມງົວແທນ
ອາຈົມຂອງມະນຸດ ຊຶ່ງເຈົ້າຈະໃຊ້ຍູ່ງເຂົ້າຈີ່ຂອງເຈົ້າ”

16ພຣະອົງກ່າວກັບຂ້າພະເຈົ້າອີກວ່າ “ບຸດແຫ່ງມະນຸດເອີຍ ເບິ່ງແມ ເຮົາຈະທຳລາຍອາຫານ
ຫລັກໃນ ເຢຣູຊາເລັມ ເສຍ ພວກເຂົາຈະຕ້ອງຊັ່ງເຂົ້າຈີ່ຮັບປະທານ ທັງຮັບປະທານດ້ວຍຄວາມ
ຢ້ານກົວ ແລະຈະຕອງນ້ຳດື່ມ ທັງດື່ມດ້ວຍອາການຢ້ານຕົກໃຈ 17ເພື່ອໃຫ້ຂາດເຂົ້າຈີ່ ແລະນ້ຳ
ໃຫ້ຕ່າງຄົນຕ່າງຕົກໃຈຢ້ານ ແລະຈ່ອຍຜອມໄປເພາະຄວາມຊົ່ວຊ້າຂອງພວກເຂົາທັງຫລາຍ”

# ບົດທີ 5

## ການທີ່ເອເຊກີເອນຕັດຜົມແມ່ນປຽບກັບໂທດສາມເທື່ອ

1“ບຸດແຫ່ງມະນຸດເອີຍ ເຈົ້າຈົ່ງເອົາມີດຄົມດວງໜຶ່ງ ຈົ່ງເອົາມີດແຖຂອງຊ່າງຕັດຜົມ ຈົ່ງແຖ
ຜົມ ແລະແຖໜວດຂອງເຈົ້າ ເອົາຕາຊັ່ງສຳລັບຊັ່ງມາ ແບ່ງຜົມນັ້ນອອກ 2ເມື່ອມື້ແຫ່ງການປິດ
ລ້ອມຄົບຖ້ວນແລ້ວ ເຈົ້າຈົ່ງເຜົາໜຶ່ງໃນສາມສ່ວນເສຍໃນໄຟກາງເມືອງ ແລະເອົາໜຶ່ງໃນສາມ
ອີກ ສ່ວນໜຶ່ງມາ ເອົາມີດຟັນໃຫ້ຮອບເມືອງ ແລະໜຶ່ງໃນສາມອີກສ່ວນໜຶ່ງນັ້ນ ເຈົ້າຈົ່ງໃຫ້ລົມ
ພັດກະຈາຍໄປ ແລະເຮົາຈະຖອດດາບອອກຕາມໄປ 3ແລະເຈົ້າຈົ່ງເອົາເສັ້ນຜົມນັ້ນມາໜ້ອຍໜຶ່ງ
ມັດຕິດໄວ້ທີ່ເສື້ອຄຸມຂອງເຈົ້າ 4ແລະຈົ່ງເອົາຜົມເຫລົ່ານີ້ມາອີກ ຈົ່ງໂຍນເຂົ້າໄປໃນໄຟໃຫ້ໄໝ້
ເສຍໃນໄຟນັ້ນ ຈາກບ່ອນນັ້ນ ຈະມີໄຟເຂົ້າໄປໃນເຊື້ອສາຍ ອິສຣາເອນ ທັງໝົດ

5ອົງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ກ່າວດັ່ງນີ້ວ່າ ນີ້ຄື ເຢຣູຊາເລັມ ເຮົາຕັ້ງນາງໄວ້ໃນທ່າມກາງ
ປະຊາຊາດ ແລະປະເທດທັງຫລາຍທີ່ຢູ່ອ້ອມຮອບ 6ເຢຣູຊາເລັມ ໄດ້ປ່ຽນຄຳຕັດສິນຂອງເຮົາໃຫ້
ເປັນສິ່ງທີ່ຊົ່ວຮ້າຍຫລາຍກວ່າປະຊາຊາດໃດໆ ແລະໄດ້ປ່ຽນກົດເກນຂອງເຮົາຫລາຍກວ່າປະ-
ເທດທີ່ຢູ່ອ້ອມຮອບ ໂດຍປະຕິເສດບໍ່ຮັບຄຳຕັດສິນຂອງເຮົາ ແລະບໍ່ດຳເນີນຕາມກົດເກນຂອງ
ເຮົາ

7ເພາະສະນັ້ນ ອົງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ກ່າວດັ່ງນີ້ວ່າ ເພາະເຫດວ່າເຈົ້າກະບົດຫລາຍ

ກວ່າປະຊາຊາດທີ່ຢູ່ຮອບເຈົ້າ ແລະບໍ່ໄດ້ດຳເນີນຕາມກົດເກນ ຫລືຮັກສາຄຳຕັດສິນຂອງເຮົາ
ແຕ່ໄດ້ປະພຶດຕາມຄຳຕັດສິນຂອງປະຊາຊາດທີ່ຢູ່ຮອບເຈົ້າ
8ເພາະສະນັ້ນ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ ເບິ່ງແມ ເຮົານີ້ແຫລະເປັນສັດຕູ
ກັບເຈົ້າ ເຮົາຈະພິພາກສາລົງໂທດເຈົ້າທ່າມກາງສາຍຕາຂອງປະຊາຊາດທັງຫລາຍ 9ແລະຍ້ອນ
ການໜ້າກຽດຊັງທັງໝົດຂອງເຈົ້າ ເຮົາຈະເຮັດແກ່ເຈົ້າເໝືອນທີ່ເຮົາບໍ່ເຄີຍເຮັດ ແລະເຮົາຈະບໍ່
ເຮັດແບບນັ້ນຕໍ່ໄປອີກ 10ເພາະສະນັ້ນ ພໍ່ຈະກິນລູກຊາຍຂອງຕົນທ່າມກາງເຈົ້າທັງຫລາຍ ແລະ
ບັນດາລູກຊາຍຈະກິນພໍ່ຂອງຕົນ ເຮົາຈະພິພາກສາລົງໂທດເຈົ້າ ຜູ້ໃດໃນພວກເຈົ້າທີ່ເຫລືອຢູ່
ເຮົາຈະໃຫ້ກະຈັດກະຈາຍໄປຕາມລົມທຸກທິດ
11ເພາະສະນັ້ນ ອົງພຣະຜູ້ເປັນເຈົ້າພຣະເຈົ້າຈຶ່ງກ່າວວ່າ ເຮົາມີຊີວິດຢູ່ສັນໃດ ເພາະເຈົ້າໄດ້
ເຮັດໃຫ້ສະຖານທີ່ບໍລິສຸດຂອງເຮົາເປັນມົນທິນດ້ວຍສິ່ງໜ້າກຽດຊັງທັງໝົດຂອງເຈົ້າ ເຮົາຈະຕັດ
ເຈົ້າລົງ ໃນຕາຂອງເຮົາຈະບໍ່ປານີ ເຮົາຈະບໍ່ສົງສານເຈົ້າອີກ 12ພວກເຈົ້າໜຶ່ງສ່ວນສາມຈະຕາຍ
ເພາະພະຍາດລະບາດ ແລະຈິບຫາຍດ້ວຍການອຶດຢາກອາຫານໃນໝູ່ພວກເຈົ້າ ອີກໜຶ່ງສ່ວນ
ສາມຈະລົ້ມຕາຍດ້ວຍດາບຢູ່ຮອບເຈົ້າ ແລະອີກໜຶ່ງສ່ວນສາມ ເຮົາຈະໃຫ້ກະຈັດກະຈາຍໄປ
ຕາມລົມທຸກທິດ ແລະເຮົາຈະຖອດດາບອອກໄລ່ຕາມພວກເຂົາທັງຫລາຍໄປ 13ເຊັ່ນນີ້ແຫລະ
ຄວາມໂກດຮ້າຍຂອງເຮົາຈະມອດລົງແລະເຮົາຈະລະບາຍຄວາມຮ້າຍຂອງເຮົາຈົນໝົດ ແລະພໍ-
ໃຈແລ້ວ ພວກເຂົາທັງຫລາຍຈະໄດ້ຮູ້ວ່າ ເຮົາແມ່ນພຣະຜູ້ເປັນເຈົ້າໄດ້ກ່າວເຊັ່ນນີ້ດ້ວຍໃຈຈົດຈໍ່
ເມື່ອຄວາມຮ້າຍຂອງເຮົາຕໍ່ພວກເຂົາມອດລົງແລ້ວ
14ຍິ່ງໄປກວ່ານັ້ນ ເຮົາຈະເຮັດໃຫ້ເຈົ້າອັບອາຍຂາຍໜ້າແລະເປັນທີ່ປະນາມໃນທ່າມກາງປະ-
ຊາຊາດທີ່ຢູ່ອ້ອມຮອບເຈົ້າ ແລະໃນສາຍຕາຂອງບັນດາຜູ້ທີ່ຜ່ານໄປ 15ເຈົ້າຈະເປັນທີ່ປະນາມ
ແລະເຍາະເຍີ້ຍ ເປັນຄຳສັ່ງສອນແລະເປັນທີ່ໜ້າອັບອາຍແກ່ປະຊາຊາດທີ່ຢູ່ອ້ອມຮອບເຈົ້າ ເມື່ອ
ເຮົາຈະພິພາກສາລົງໂທດເຈົ້າດ້ວຍຄວາມໂກດຮ້າຍ ແລະຄວາມຮ້ອນຮົນ ກັບການຕິຕຽນຢ່າງ
ໂກດຮ້າຍຂອງເຮົາ ເຮົາພຣະຜູ້ເປັນເຈົ້າ ໄດ້ລັ່ນຄຳເວົ້າເຊັ່ນນີ້ແລ້ວ 16ເມື່ອເຮົາຈະປ່ອຍລູກໜ້າ
ທະນູແຫ່ງການອຶດຢາກອາຫານ ຄືລູກທະນູແຫ່ງການທຳລາຍໃນທ່າມກາງເຈົ້າ ຊຶ່ງເຮົາຈະປ່ອຍ
ໄປທຳລາຍເຈົ້າ ແລະເມື່ອເຮົາເພີ່ມການອຶດຢາກອາຫານໃຫ້ເຈົ້າ ທຳລາຍອາຫານຫລັກຂອງເຈົ້າ
ເສຍ 17ເຮົາຈະສົ່ງຄວາມອຶດຢາກອາຫານ ແລະສັດປ່າຮ້າຍມາສູ້ເຈົ້າ ມັນຈະປຸ້ນລູກຫລານຂອງ
ເຈົ້າໄປ ພະຍາດລະບາດ ແລະເລືອດຈະຜ່ານເຈົ້າ ແລະເຮົາຈະນຳດາບມາເໜືອເຈົ້າ ເຮົາແມ່ນ
ພຣະຜູ້ເປັນເຈົ້າໄດ້ລັ່ນຄຳເວົ້າເຊັ່ນນີ້ແລ້ວ”

# ບົດທີ 6

## ຄຳສາບແຊ່ງພູເຂົາທັງຫລາຍຂອງອິສຣາເອນ

1ພຣະທຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າວ່າ 2“ບຸດແຫ່ງມະນຸດເອີຍ ຈົ່ງມຸ່ງໜ້າຂອງ
ເຈົ້າໄປທີ່ພູເຂົາທັງຫລາຍຂອງອິສຣາເອນ ແລະຈົ່ງປະກາດພຣະທຳກ່າວໂທດພູເຂົານັ້ນ 3ໂດຍ
ກ່າວວ່າ ພູເຂົາທັງຫລາຍຂອງອິສຣາເອນເອີຍ ຈົ່ງຟັງພຣະທຳຂອງອົງພຣະຜູ້ເປັນເຈົ້າ ພຣະ-

ເຈົ້າກ່າວດັ່ງນີ້ແກ່ພູເຂົາທັງຫລາຍ ແກ່ໂນນພູ ຫ້ວຍ ແລະພູເຂົາທັງຫລາຍວ່າ ເບິ່ງແມ ເຮົາຈະ
ນຳດາບມາເໜືອເຈົ້າ ແລະເຮົາຈະທຳລາຍສະຖານທີ່ບູຊາອັນສູງຂອງເຈົ້າ [4]ແທ່ນບູຊາຂອງເຈົ້າ
ຈະມ້າງເພ ແລະຮູບເຄົາລົບທັງຫລາຍຂອງເຈົ້າຈະພັງທະລາຍ ແລະຄົນທີ່ຖືກຂ້າເທິງເຈົ້ານັ້ນ
ເຮົາຈະໂຍນລົງຕໍ່ໜ້າຮູບເຄົາລົບຂອງເຈົ້າ [5]ເຮົາຈະວາງສົບຄົນອິສຣາເອນໄວ້ຕໍ່ໜ້າຮູບເຄົາລົບ
ຂອງເຂົາ ແລະເຮົາຈະກະຈາຍກະດູກຂອງເຈົ້າຮອບແທ່ນບູຊາຂອງເຈົ້າ [6]ເຈົ້າອາໄສຢູ່ທີ່ໃດ
ເມືອງຂອງເຈົ້າຈະມ້າງເພ ແລະປູຊະນີຍະສະຖານສູງຂອງເຈົ້າຈະມ້າງເສຍ ດັ່ງນັ້ນແຫລະ
ແທ່ນບູຊາຂອງເຈົ້າຈະຮ້າງເປົ່າ ແລະເປ່ເພ ຮູບເຄົາລົບຂອງເຈົ້າຈະຫັກ ແລະສິ້ນສຸດລົງ ຮູບ
ເຄົາລົບທັງຫລາຍຂອງເຈົ້າຈະຖືກຕັດລົງ ແລະການງານຂອງເຈົ້າຈະຖືກກວາດຖິ້ມ [7]ຄົນທີ່ຖືກ
ຂ້າຈະລົ້ມລົງທ່າມກາງເຈົ້າ ແລະເຈົ້າຈະຮູ້ວ່າເຮົາແມ່ນພຣະຜູ້ເປັນເຈົ້າ

## ບາງຄົນຈະລອດພົ້ນຈາກຄວາມຕາຍ

[8]ແຕ່ເຮົາຈະໃຫ້ເຈົ້າເຫລືອຢູ່ນຳບາງຄົນ ເພື່ອເຈົ້າຈະມີບາງຄົນທ່າມກາງປະຊາຊາດທີ່ໜີພົ້ນ
ດາບໄປ ເມື່ອເຈົ້າຈະກະຈາຍໄປຢູ່ໃນປະເທດຕ່າງໆ [9]ແລ້ວຄົນໃນພວກເຈົ້າທີ່ໜີໄປໄດ້ນັ້ນ ຈະ
ລະນຶກເຖິງເຮົາທ່າມກາງປະຊາຊາດ ຊຶ່ງພວກເຂົາຖືກກວາດໄປເປັນຊະເລີຍນັ້ນ ເພາະເຮົາເສຍ
ພຣະໄທເນື່ອງດ້ວຍໃຈບໍ່ສັດຊື່ຂອງພວກເຂົາຊຶ່ງໄດ້ຫວິດຈາກເຮົາໄປນັ້ນ ແລະເນື່ອງດ້ວຍຕາ
ຂອງພວກເຂົາທີ່ເບິ່ງຮູບເຄົາລົບດ້ວຍໃຈບໍ່ສັດຊື່ນັ້ນ ພວກເຂົາຈະກຽດຊັງຕົວເອງເນື່ອງດ້ວຍ
ຄວາມຊົ່ວຊຶ່ງເຂົາໄດ້ເຮັດ ແລະສິ່ງໜ້າກຽດຊັງທັງໝົດຂອງເຂົາດ້ວຍ [10]“ພວກເຂົາຈະຮູ້ວ່າເຮົາ
ແມ່ນພຣະຜູ້ເປັນເຈົ້າ ເຮົາບໍ່ໄດ້ເວົ້າລ້າໆວ່າ ເຮົາຈະເຮັດການຮ້າຍນີ້ແກ່ພວກເຂົາ”

## ພະຍາດລະບາດໃນແຜ່ນດິນ

[11]ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ “ຈົ່ງຕົບມື ແລະທືບຕີນຂອງເຈົ້າ ແລະກ່າວວ່າ
ອະນິດຈັງເອີຍ ເພາະບັນດາຄວາມຊົ່ວອັນໜ້າກຽດຊັງຂອງເຊື້ອສາຍອິສຣາເອນ ເຫດວ່າພວກ
ເຂົາທັງຫລາຍຈະລົ້ມລົງດ້ວຍດາບ ດ້ວຍການອຶດຢາກອາຫານ ແລະດ້ວຍພະຍາດລະບາດ [12]ຜູ້
ທີ່ຢູ່ຫ່າງໄກອອກໄປ ຈະຕາຍດ້ວຍພະຍາດລະບາດ ຜູ້ທີ່ຢູ່ໃກ້ກໍຈະລົ້ມຕາຍດ້ວຍດາບ ແລະຜູ້ທີ່
ເຫລືອຢູ່ ແລະຖືກອ້ອມໄວ້ຈະຕາຍດ້ວຍການອຶດຢາກອາຫານ ເຮົາຈະໃຫ້ຄວາມຮ້ອນຮົນຂອງ
ເຮົາມີຢູ່ເທິງພວກເຂົາຈົນກວ່າຈະມອດລົງ ເຊັ່ນນີ້ແຫລະ [13]ແລະເຈົ້າຈະຮູ້ວ່າເຮົາແມ່ນພຣະຜູ້-
ເປັນເຈົ້າເມື່ອຄົນທີ່ຖືກຂ້ານອນຢູ່ທ່າມກາງຮູບເຄົາລົບຂອງພວກເຂົາ ຮອບແທ່ນບູຊາຂອງເຂົາ
ເທິງໂນນພູສູງທຸກແຫ່ງ ເທິງຍອດເຂົາທັງໝົດ ຢູ່ກ້ອງຕົ້ນໄມ້ຂຽວທຸກຕົ້ນ ແລະກ້ອງຕົ້ນໂອກໃບ
ດົກທຸກຕົ້ນ ບໍ່ວ່າບ່ອນໃດກໍຕາມທີ່ພວກເຂົາຖວາຍກິ່ນທີ່ເພິ່ງພໍໃຈແກ່ຮູບເຄົາລົບທັງໝົດຂອງຕົນ
[14]ເຮົາຈະຢື່ນມືຂອງເຮົາອອກຕໍ່ສູ້ພວກເຂົາ ແລະເຮັດໃຫ້ແຜ່ນດິນນັ້ນຮົກຮ້າງ ແລະຖິ້ມໃຫ້ຮ້າງ
ຕະຫລອດບ່ອນຢູ່ອາໄສທັງໝົດຂອງພວກເຂົາ ຄືຮ້າງເປົ່າຫລາຍກວ່າຖິ່ນແຫ້ງແລ້ງກັນດານໄປ
ທາງດິບລາ ແລ້ວພວກເຂົາຈຶ່ງຈະຮູ້ວ່າເຮົາແມ່ນພຣະຜູ້ເປັນເຈົ້າ”

# ບົດທີ 7

## ພຣະເຈົ້າໄດ້ພິພາກສາອິສຣາເອນ

1ພຣະທຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າອີກວ່າ 2"ບຸດແຫ່ງມະນຸດເອີຍ ອົງພຣະຜູ້-
ເປັນເຈົ້າພຣະເຈົ້າກ່າວກັບແຜ່ນດິນອິສຣາເອນດັ່ງນີ້ວ່າ ອາວະສານ ຄວາມສິ້ນສຸດໄດ້ມາເຖິງ
ທັງສີ່ມຸມຂອງແຜ່ນດິນແລ້ວ 3ບັດນີ້ ຄວາມສິ້ນສຸດກໍມາເຖິງເຈົ້າ ແລະເຮົາຈະປ່ອຍໃຫ້ຄວາມ
ໂກດຮ້າຍຂອງເຮົາມາເໜືອເຈົ້າທັງຫລາຍ ແລະຈະພິພາກສາເຈົ້າໃຫ້ສົມກັບທາງປະພຶດຂອງເຈົ້າ
ເຮົາຈະຕອບແທນເຈົ້າເພາະຄວາມໜ້າກຽດຊັງທັງຫລາຍຂອງເຈົ້າ 4ໃນຕາຂອງເຮົາຈະບໍ່ປານີ
ເຈົ້າ ແລະເຮົາຈະບໍ່ສົງສານເຈົ້າ ແຕ່ເຮົາຈະຕອບແທນເຈົ້າໃຫ້ສົມກັບທາງປະພຶດຂອງເຈົ້າ ຂະ-
ນະທີ່ສິ່ງໜ້າກຽດຊັງຍັງຢູ່ທ່າມກາງເຈົ້າ ແລ້ວເຈົ້າຈະຮູ້ວ່າ ເຮົາແມ່ນພຣະຜູ້ເປັນເຈົ້າ

5ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ ວິບັດແລ້ວວິບັດອີກ ເບິ່ງແມ ວິບັດມາເຖິງແລ້ວ
6ຄວາມສິ້ນສຸດມາເຖິງແລ້ວ ອາວະສານນັ້ນມາເຖິງ ມັນຕື່ນຂຶ້ນຕໍ່ສູ້ເຈົ້າ ເບິ່ງແມ ວິບັດມາເຖິງ
ແລ້ວ 7ຊາວແຜ່ນດິນເອີຍ ຕອນເຊົ້າມາເຖິງແລ້ວ ເວລາມາເຖິງແລ້ວ ວັນແຫ່ງຄວາມວຸ້ນວາຍ
ໃກ້ເຂົ້າມາແລ້ວ ແລະບໍ່ແມ່ນສຽງໂຫ່ຮ້ອງຍິນດີຢູ່ເທິງພູເຂົາ 8ບັດນີ້ ອີກບໍ່ດົນແລ້ວ ເຮົາຈະລະ-
ບາຍພຣະພິໂລດຂອງເຮົາອອກໃສ່ເຈົ້າ ແລະໃຫ້ຄວາມໂກດຮ້າຍຂອງເຮົາຊຶ່ງມີຕໍ່ເຈົ້າສຳເລັດ
ແລະຈະພິພາກສາເຈົ້າໃຫ້ສົມກັບການປະພຶດຂອງເຈົ້າ ແລະເຮົາຈະຕອບແທນເຈົ້າເພາະການ
ໜ້າກຽດຊັງທັງໝົດຂອງເຈົ້າ 9ໃນຕາຂອງເຮົາຈະບໍ່ປານີ ແລະເຮົາຈະບໍ່ສົງສານເຈົ້າ ເຮົາຈະ
ຕອບແທນເຈົ້າໃຫ້ສົມກັບການ ປະພຶດຂອງເຈົ້າ ຂະນະທີ່ສິ່ງໜ້າກຽດຊັງຂອງເຈົ້າຍັງຢູ່ທ່າມກາງ
ເຈົ້າ ແລ້ວເຈົ້າຈະຮູ້ວ່າ ເຮົາແມ່ນພຣະຜູ້ເປັນເຈົ້າຜູ້ທຸບຕີ

10ເບິ່ງແມ ວັນນັ້ນມາເຖິງແລ້ວ ຕອນເຊົ້າອອກມາແລ້ວ ຄວາມອວດອົ່ງກໍບານແລ້ວ ຄວາມ
ຈອງຫອງກໍບານອອກ 11ຄວາມທາລຸນໄດ້ຈະເລີນເປັນຄວາມອວດອົ່ງອັນຊົ່ວຮ້າຍ ຈະບໍ່ມີໃຜ
ເຫລືອຢູ່ເລີຍ ປະຊາຊົນຂອງພວກເຂົາກໍບໍ່ມີ ສິ່ງຂອງຂອງພວກເຂົາກໍບໍ່ມີ ບໍ່ມີໃຜຮ້ອງຄາງເພື່ອ
ພວກເຂົາເລີຍ 12ເວລານັ້ນມາເຖິງແລ້ວ ວັນນັ້ນກໍໃກ້ເຂົ້າມາ ຢ່າໃຫ້ຜູ້ຊື້ດີໃຈ ຢ່າໃຫ້ຜູ້ຂາຍເສຍ
ໃຈ ເພາະພຣະພິໂລດຢູ່ເໜືອປະຊາຊົນທັງໝົດຂອງນາງ 13ເພາະວ່າຜູ້ຂາຍຈະບໍ່ໄດ້ກັບໄປຫາ
ສິ່ງທີ່ຕົນໄດ້ຂາຍໄປ ຂະນະທີ່ເຂົາຍັງມີຊີວິດຢູ່ ເພາະວ່າ ນິມິດນັ້ນກໍກ່ຽວຂ້ອງກັບປະຊາຊົນທັງ
ປວງ ແລະຈະບໍ່ຖອຍຫລັງກັບ ແລະເພາະຄວາມຊົ່ວຊ້າຂອງເຂົາ ຈຶ່ງຈະບໍ່ມີຜູ້ໃດຮັກສາຊີວິດໄວ້
ໄດ້

14ພວກເຂົາໄດ້ເປົ່າແກແລ້ວ ແລະໄດ້ຕຽມທຸກຢ່າງໄວ້ພ້ອມ ແຕ່ບໍ່ມີໃຜເຂົ້າສົງຄາມ ຍ້ອນ
ຄວາມພິໂລດຂອງເຮົາຢູ່ເໜືອປະຊາຊົນທັງໝົດຂອງນາງ 15ດາບກໍຢູ່ຂ້າງນອກ ພະຍາດລະ-
ບາດ ແລະການອຶດຢາກອາຫານກໍຢູ່ຂ້າງໃນ ຜູ້ທີ່ຢູ່ໃນທົ່ງນາ ຈະຕາຍດ້ວຍດາບ ແລະຜູ້ທີ່ຢູ່ໃນ
ເມືອງກໍຈະຈິບຫາຍໄປດ້ວຍການອຶດຢາກອາຫານ ແລະພະຍາດລະບາດ 16ແຕ່ຜູ້ໜຶ່ງຜູ້ໃດທີ່
ລອດຕາຍໄດ້ຈະໜີໄປຢູ່ເທິງພູເຂົາເໝືອນນົກເຂົາແຫ່ງພູເຂົາ ທຸກຄົນກໍຮ້ອງຄວນຄາງເພາະ
ຄວາມຊົ່ວຊ້າຂອງຕົນ 17ມືທັງໝົດຈະອ່ອນແອ ແລະເຂົ່າທັງໝົດຈະອ່ອນເໝືອນກັບນ້ຳ 18ພວກ
ເຂົາທັງຫລາຍຈະຄາດແອວໄວ້ດ້ວຍຜ້າກະສອບ ແລະຄວາມສັ່ນສະທ້ານຈະປົກພວກເຂົາໄວ້

ຄວາມອັບອາຍຈະຢູ່ທີ່ໃບໜ້າຂອງພວກເຂົາທຸກຄົນ ແລະຫົວຂອງເຂົາຈະລ້ານໝົດ [19]ພວກເຂົາ
ຈະໂຍນເງິນຂອງເຂົາໄປໃນຖະໜົນ ແລະຈະຖິ້ມຄຳຂອງເຂົາ ເງິນ ແລະຄຳຂອງເຂົາບໍ່ອາດທີ່
ຈະຊ່ວຍພວກເຂົາໃຫ້ພົ້ນໃນວັນແຫ່ງພຣະພິໂລດຂອງພຣະຜູ້ເປັນເຈົ້າ ເຂົາຈະບໍ່ຫິວ ຫລືບັນຈຸ
ໃຫ້ເຕັມທ້ອງດ້ວຍເງິນຄຳກໍບໍ່ໄດ້ ເພາະວ່າເປັນສິ່ງທີ່ສະດຸດໃຫ້ພວກເຂົາເຮັດຄວາມຊົ່ວຊ້າ
[20]ຄວາມງົດງາມແຫ່ງເຄື່ອງປະດັບຂອງພວກເຂົາ ພວກເຂົາໃຊ້ເພື່ອກຽດຈອມປອມ ພວກເຂົາ
ໃຊ້ສ້າງຮູບເຄົາລົບອັນໜ້າກຽດຊັງ ແລະສິ່ງໜ້າກຽດຊັງຂອງເຂົາ ເພາະສະນັ້ນ ເຮົາຈະເຮັດໃຫ້
ສິ່ງເຫລົ່ານັ້ນເປັນສິ່ງທີ່ຫ່າງໄກຈາກພວກເຂົາ [21]ແລະເຮົາຈະມອບສິ່ງເຫລົ່ານັ້ນໄວ້ໃນມືຂອງຄົນ
ຕ່າງດ້າວໃຫ້ເປັນຂອງປຸ້ນ ແລະແກ່ຄົນຊົ່ວໃນແຜ່ນດິນໂລກໃຫ້ເປັນຂອງປຸ້ນໄດ້ ແລະພວກເຂົາ
ທັງຫລາຍຈະເຮັດໃຫ້ເປັນມົນທິນ [22]ເຮົາຈະຫັນໜ້າຂອງເຮົາໄປເສຍຈາກພວກເຂົາດ້ວຍ ພວກ
ເຂົາຈຶ່ງຈະເຮັດສະຖານທີ່ລັບລີ້ຂອງເຮົາໃຫ້ເປັນມົນທິນ ແລະໂຈນຈະເຂົ້າໄປໃນບ່ອນນັ້ນ ເຮັດ
ໃຫ້ເປັນມົນທິນ [23]ຈົ່ງເຮັດໂສ້ ເພາະວ່າແຜ່ນດິນນັ້ນເຕັມໄປດ້ວຍຄະດີທີ່ເປິເປື້ອນດ້ວຍເລືອດ
ແລະເມືອງກໍເຕັມໄປດ້ວຍຄວາມທາລຸນ [24]ສະນັ້ນ ເຮົາຈະນຳປະຊາຊາດທີ່ຊົ່ວຮ້າຍທີ່ສຸດມາຖື
ກຳມະສິດບ້ານເຮືອນຂອງພວກເຂົາ ແລະເຮົາຈະເຮັດໃຫ້ຄວາມຈອງຫອງຂອງຄົນທີ່ແຂງແຮງ
ນັ້ນສິ້ນສຸດລົງ ແລະສະຖານທີ່ບໍລິສຸດຂອງເຂົາຈະເປັນມົນທິນໄປ [25]ເມື່ອການທຳລາຍມາເຖິງ
ພວກເຂົາຈະສະແຫວງຫາສັນຕິພາບ ແຕ່ກໍບໍ່ມີເລີຍ [26]ວິບັດມາເຖິງແລ້ວ ວິບັດຈະມາເຖິງອີກ
ແລະຂ່າວລືຈະເກີດຂຶ້ນຕາມຂ່າວລື ພວກເຂົາຈະສະແຫວງຫານິມິດຈາກຜູ້ປະກາດພຣະທຳ ແຕ່
ພຣະບັນຍັດຈະພິນາດໄປຈາກປະໂລຫິດ ແລະຄຳສັ່ງສອນໄປຈາກພວກຜູ້ໃຫຍ່ [27]ກະສັດຈະໄວ້
ທຸກ ເຈົ້ານາຍຈະໝົດຄວາມຫວັງ ແລະມືຂອງປະຊາຊົນແຫ່ງແຜ່ນດິນຈະສັ່ນສະທ້ານເຮົາຈະ
ເຮັດແກ່ພວກເຂົາຕາມທາງຂອງເຂົາ ແລະເຮົາຈະພິພາກສາພວກເຂົາຕາມຫລັກການພິພາກສາ
ຂອງເຂົາ ແລະພວກເຂົາຈະຮູ້ວ່າເຮົາແມ່ນພຣະຜູ້ເປັນເຈົ້າ”

# ບົດທີ 8

## ເອເຊກີເອນເຫັນນິມິດວ່າຄົນອິສຣາເອນຂາບໄຫວ້ຮູບເຄົາລົບ

[1]ຕໍ່ມາເມື່ອວັນທີຫ້າ ເດືອນທີຫົກ ໃນປີທີຫົກ ຂະນະທີ່ຂ້າພະເຈົ້ານັ່ງຢູ່ໃນເຮືອນຂອງຂ້າພະ-
ເຈົ້າ ແລະພວກຜູ້ໃຫຍ່ຂອງພວກຢູດານັ່ງຢູ່ຕໍ່ໜ້າຂ້າພະເຈົ້າ ພຣະຫັດຂອງອົງພຣະຜູ້ເປັນເຈົ້າ
ລົງມາເທິງຂ້າພະເຈົ້າໃນບ່ອນນັ້ນ [2]ແລ້ວຂ້າພະເຈົ້າກໍເບິ່ງ ແລະເບິ່ງແມ ມີລັກສະນະຄືຜູ້ຊາຍ
ຄົນໜຶ່ງເປັນໄຟ ເບື້ອງລຸ່ມຂອງສ່ວນທີ່ເບິ່ງເຫັນເປັນແອວນັ້ນເປັນໄຟ ເທິງແອວຂຶ້ນໄປເປັນແສງ
ແຈ້ງເຫລື້ອມຂອງທອງເຫລືອງທີ່ເຫລື້ອມໃສ [3]ເພິ່ນຍື່ນສ່ວນທີ່ມີລັກສະນະເປັນມືນັ້ນອອກມາຈັບ
ຜົມຂອງຂ້າພະເຈົ້າກຳໜຶ່ງ ແລະພຣະວິນຍານໄດ້ຍົກຂ້າພະເຈົ້າຂຶ້ນລະຫວ່າງໂລກ ແລະສະ-
ຫວັນ ແລະນຳຂ້າພະເຈົ້າມາເຖິງເຢຣູຊາເລັມ ໃນນິມິດຂອງພຣະເຈົ້າ ມາຍັງທາງເຂົ້າປະຕູ
ດ້ານເໜືອຂອງເດີ່ນຊັ້ນໃນ ຊຶ່ງເປັນທີ່ຕັ້ງຂອງຮູບພະແຫ່ງຄວາມອິດສາ ອັນເຮັດໃຫ້ບັງເກີດ
ຄວາມອິດສາ [4]ເບິ່ງແມ ສະຫງ່າລາສີຂອງພຣະເຈົ້າແຫ່ງອິສຣາເອນກໍຢູ່ບ່ອນນັ້ນ ເໝືອນນິມິດ
ທີ່ຂ້າພະເຈົ້າໄດ້ເຫັນໃນທົ່ງພຽງ

5ແລ້ວພຣະອົງກ່າວກັບຂ້າພະເຈົ້າວ່າ "ບຸດແຫ່ງມະນຸດເອີຍ ບັດນີ້ ຈົ່ງເງີຍໜ້າຂຶ້ນໄປເບິ່ງ
ທາງທິດເໜືອ" ຂ້າພະເຈົ້າຈຶ່ງເງີຍໜ້າຂຶ້ນໄປເບິ່ງທາງທິດເໜືອ ແລະ ເບິ່ງແມ ທາງທິດເໜືອ
ຂອງປະຕູແທ່ນບູຊາໃນທາງເຂົ້າ ຮູບຄວາມອິດສານີ້ຢູ່ບ່ອນນັ້ນ

6ແລະພຣະອົງກ່າວກັບຂ້າພະເຈົ້າອີກວ່າ "ບຸດແຫ່ງມະນຸດເອີຍ ເຈົ້າເຫັນຫລືບໍ່ວ່າພວກເຂົາ
ເຮັດຫຍັງຢູ່ ຄືການໜ້າກຽດຊັງອັນຍິ່ງໃຫຍ່ ຊຶ່ງເຊື້ອສາຍ ອິສຣາເອນ ເຮັດຢູ່ບ່ອນນີ້ ອັນຈະໃຫ້
ເຮົາໄປໄກຈາກສະຖານທີ່ບໍລິສຸດຂອງເຮົາ ແຕ່ເຈົ້າຈົ່ງຖອຍຫລັງກັບ ແລ້ວຈະໄດ້ເຫັນການໜ້າ
ກຽດຊັງຍິ່ງໃຫຍ່ກວ່ານີ້ອີກ"

7ແລະພຣະອົງໄດ້ນຳຂ້າພະເຈົ້າມາເຖິງປະຕູລານ ແລະເມື່ອຂ້າພະເຈົ້າເບິ່ງ ເບິ່ງແມ ກໍເຫັນ
ປ່ອງໜຶ່ງຢູ່ໃນກຳແພງ 8ແລ້ວພຣະອົງກ່າວກັບຂ້າພະເຈົ້າວ່າ "ບຸດແຫ່ງມະນຸດເອີຍ ຈົ່ງເຈາະ
ເຂົ້າໄປໃນກຳແພງ" ແລະເມື່ອຂ້າພະເຈົ້າໄດ້ເຈາະເຂົ້າໄປໃນກຳແພງແລ້ວ ມີປະຕູຢູ່ປະຕູໜຶ່ງ

9ພຣະອົງກ່າວກັບຂ້າພະເຈົ້າວ່າ "ຈົ່ງເຂົ້າໄປ ໄປເບິ່ງການອັນໜ້າກຽດຊັງຢ່າງຮ້າຍແຮງຊຶ່ງ
ພວກເຂົາເຮັດໃນບ່ອນນີ້" 10ດັ່ງນັ້ນ ຂ້າພະເຈົ້າຈຶ່ງເຂົ້າໄປ ແລະໄດ້ເຫັນ ເປັນຮູບພາບເທິງຝາ
ໂດຍຮອບ ມີສັດເລືອຄານທຸກຊະນິດ ແລະສັດທີ່ໜ້າກຽດຊັງ ແລະຮູບເຄົາລົບທັງໝົດຂອງ
ເຊື້ອສາຍ ອິສຣາເອນ 11ມີພວກຜູ້ໃຫຍ່ແຫ່ງເຊື້ອສາຍ ອິສຣາເອນ ເຈັດສິບຄົນຢືນຢູ່ຂ້າງໜ້າຮູບ
ເຫລົ່ານັ້ນ ແລະມີຢາອາຊານີຢາ ລູກຊາຍຊາຟານ ຢືນຢູ່ໃນໝູ່ພວກເຂົາທັງຫລາຍ ຕ່າງກໍມີ
ຖາດໄຟຢູ່ໃນມື ແລະຄວັນໝາທົບຂອງເຄື່ອງບູຊາກໍຂຶ້ນໄປຂ້າງເທິງ

12ແລ້ວພຣະອົງກ່າວກັບຂ້າພະເຈົ້າວ່າ "ລູກແຫ່ງມະນຸດເອີຍ ເຈົ້າໄດ້ເຫັນແລ້ວບໍ່ແມ່ນບໍວ່າ
ພວກຜູ້ໃຫຍ່ຂອງເຊື້ອສາຍ ອິສຣາເອນ ເຮັດຫຍັງຢູ່ໃນບ່ອນມືດ ທຸກຄົນຕ່າງກໍຢູ່ໃນຫ້ອງຮູບພາບ
ຂອງຕົນ ເພາະພວກເຂົາເວົ້າວ່າ 'ພຣະຜູ້ເປັນເຈົ້າບໍ່ທອດພຣະເນດເຫັນເຮົາ ພຣະຜູ້ເປັນເຈົ້າ
ໄດ້ປະຖິ້ມແຜ່ນດິນນີ້ເສຍແລ້ວ'" 13ພຣະອົງກ່າວກັບຂ້າພະເຈົ້າດ້ວຍວ່າ "ເຈົ້າຈົ່ງຖອຍຫລັງກັບ
ແລ້ວຈະເຫັນການອັນໜ້າກຽດຊັງຊຶ່ງພວກເຂົາເຮັດຫລາຍກວ່ານີ້ອີກ"

14ແລ້ວພຣະອົງໄດ້ນຳຂ້າພະເຈົ້າມາເຖິງທາງເຂົ້າປະຕູພຣະວິຫານຂອງ ພຣະຜູ້ເປັນເຈົ້າ ດ້ານ
ເໜືອ ແລະເບິ່ງແມ ບ່ອນນັ້ນມີຜູ້ຍິງຫລາຍຄົນນັ່ງຮ້ອງໄຫ້ອາໄລເຈົ້າຕຳມຸດ (ພະຂອງຊາວສຸ-
ເມີ) 15ແລ້ວພຣະອົງກ່າວກັບຂ້າພະເຈົ້າວ່າ "ບຸດແຫ່ງມະນຸດເອີຍ ເຈົ້າເຫັນແລ້ວບໍ ເຈົ້າຈົ່ງ
ຖອຍຫລັງກັບ ແລ້ວຈະເຫັນການອັນໜ້າກຽດຊັງຫລາຍກວ່າສິ່ງເຫລົ່ານີ້ອີກ"

16ແລ້ວພຣະອົງໄດ້ນຳຂ້າພະເຈົ້າເຂົ້າມາໃນເດີ່ນຊັ້ນໃນແຫ່ງພຣະວິຫານຂອງ ພຣະຜູ້ເປັນເຈົ້າ
ເບິ່ງແມ ຊື່ປະຕູພຣະວິຫານຂອງ ພຣະຜູ້ເປັນເຈົ້າ ລະຫວ່າງລະບຽງ ແລະແທ່ນບູຊາ ມີຊາຍ
ປະມານຊາວຫ້າຄົນຫັນຫລັງ ໃຫ້ພຣະວິຫານ ແຫ່ງ ພຣະຜູ້ເປັນເຈົ້າ ໜ້າຂອງພວກເຂົາຫັນໄປ
ທາງທິດຕາເວັນອອກ ກຳລັງນະມັດສະການພະອາທິດ ຊື່ທິດຕາເວັນອອກນັ້ນ

17ແລ້ວພຣະອົງກ່າວກັບຂ້າພະເຈົ້າວ່າ "ບຸດແຫ່ງມະນຸດເອີຍ ເຈົ້າເຫັນແລ້ວບໍ ທີ່ເຊື້ອສາຍຢູ-
ດາ ເຮັດການອັນໜ້າກຽດຊັງ ຊຶ່ງພວກເຂົາເຮັດຢູ່ບ່ອນນີ້ ເປັນສິ່ງເລັກນ້ອຍບໍ ພວກເຂົາຈຶ່ງເຮັດ
ໃຫ້ແຜ່ນດິນເຕັມໄປດ້ວຍຄວາມທາລຸນແລະເຮັດໃຫ້ເຮົາໂກດຮ້າຍຫລາຍຂຶ້ນ ເບິ່ງແມ ພວກເຂົາ
ທັງຫລາຍເອົາງ່າໄມ້ມາແປະດັງຂອງຕົນ 18ເພາະສະນັ້ນ ເຮົາຈະເຮັດດ້ວຍຄວາມພິໂລດ ໃນຕາ

ຂອງເຮົາຈະບໍ່ປານີ ແລະເຮົາຈະບໍ່ສົງສານ ເຖິງແມ່ນວ່າພວກເຂົາຈະຮ້ອງດ້ວຍສຽງອັນດັງໃສ່ຫູ
ຂອງເຮົາ ເຮົາກໍຈະບໍ່ຟັງພວກເຂົາ”

# ບົດທີ 9

## ທູດສະຫວັນຂອງພຣະເຈົ້າຢູ່ເບື້ອງຫລັງສັດຕູຂອງອິສຣາເອນ

1ແລ້ວພຣະອົງໄດ້ເປັ່ງພຣະສຸລະສຽງດັງເຂົ້າຫູຂ້າພະເຈົ້າວ່າ “ເຈົ້າທັງຫລາຍຜູ້ເປັນພະນັກ-
ງານລົງໂທດປະຈຳເມືອງ ຈົ່ງເຂົ້າມາໃກ້ ໃຫ້ຕ່າງຄົນຖືອາວຸດແຫ່ງການທຳລາຍມາດ້ວຍ” 2ເບິ່ງ
ແມ ມີຊາຍຫົກຄົນເຂົ້າມາຈາກທາງປະຕູເທິງ ຊຶ່ງຫັນໜ້າໄປທາງເໜືອ ທຸກຄົນຖືອາວຸດສຳລັບ
ຂ້າມາ ມີຊາຍຄົນໜຶ່ງນຸ່ງຫົ່ມຜ້າປ່ານ ຖືກ່ອງນ້ຳມຶກ ເຄື່ອງຂຽນມາກັບຄົນເຫລົ່ານັ້ນດ້ວຍ ແລະ
ພວກເຂົາທັງຫລາຍເຂົ້າໄປຢືນຢູ່ຂ້າງແທ່ນທອງເຫລືອງ
3ສະຫງ່າລາສີຂອງພຣະເຈົ້າແຫ່ງອິສຣາເອນໄດ້ເຫາະຂຶ້ນໄປຈາກເຄຣຸບ ຊຶ່ງເປັນທີ່ເຄີຍສະ-
ຖິດໄປຍັງປະຕູພຣະວິຫານ ແລະພຣະອົງກ່າວຕໍ່ຊາຍຜູ້ທີ່ນຸ່ງຫົ່ມຜ້າປ່ານ ຜູ້ທີ່ຖືກ່ອງນ້ຳມຶກເຄື່ອງ
ຂຽນ 4ແລະພຣະຜູ້ເປັນເຈົ້າກ່າວສັ່ງລາວວ່າ “ຈົ່ງໄປຕະຫລອດເມືອງຄືທົ່ວເຢຣູຊາເລັມ ແລະ
ເຮັດເຄື່ອງໝາຍໄວ້ທີ່ໜ້າຜາກຂອງປະຊາຊົນທີ່ຖອນຫາຍໃຈ ແລະຮ້ອງຄາງ ຍ້ອນຄວາມໜ້າ
ກຽດຊັງທັງໝົດທີ່ເຮັດກັນໃນເມືອງ”
5ພຣະອົງກ່າວກັບຄົນອື່ນໆຊຶ່ງຂ້າພະເຈົ້າໄດ້ຍິນວ່າ “ຈົ່ງຜ່ານໄປທົ່ວເມືອງ ຕາມຊາຍຄົນນັ້ນ
ໄປ ແລະຂ້າຟັນເສຍ ໃນຕາຂອງເຈົ້າຢ່າໄດ້ປານີ ແລະເຈົ້າຢ່າສົງສານເລີຍ 6ຈົ່ງຂ້າໃຫ້ຕາຍທັງ
ຄົນເຖົ້າ ຄົນໜຸ່ມສາວ ທັງເດັກນ້ອຍໆ ແລະຜູ້ຍິງ ແຕ່ຢ່າເຂົ້າໃກ້ຜູ້ທີ່ມີເຄື່ອງໝາຍ ແລະຈົ່ງ
ເລີ່ມຕົ້ນທີ່ສະຖານທີ່ບໍລິສຸດຂອງເຮົາ” ດັ່ງນັ້ນ ເຂົາຈຶ່ງຕັ້ງຕົ້ນກັບພວກຄົນເຖົ້າຜູ້ຊຶ່ງຢູ່ຕໍ່ໜ້າພຣະ-
ວິຫານນັ້ນ
7ແລ້ວພຣະອົງກ່າວກັບພວກເຂົາວ່າ “ຈົ່ງເຮັດໃຫ້ພຣະວິຫານເປັນມົນທິນ ຈົ່ງຖິ້ມຜູ້ທີ່ຖືກຂ້າ
ໃຫ້ເຕັມເດີ່ນ ຈົ່ງໄປສາ” ພວກເຂົາທັງຫລາຍຈຶ່ງອອກໄປ ແລະຂ້າຟັນຜູ້ທີ່ຢູ່ໃນເມືອງ 8ຕໍ່ມາ
ຂະນະທີ່ພວກເຂົາກຳລັງຂ້າຟັນຢູ່ນັ້ນ ເຫລືອຂ້າພະເຈົ້າແຕ່ຜູ້ດຽວ ຂ້າພະເຈົ້າກໍກົ້ມໜ້າລົງເຖິງ
ດິນຮ້ອງວ່າ “ອະນິດຈັງ! ອົງພຣະຜູ້ເປັນເຈົ້າພຣະເຈົ້າ ພຣະອົງຈະໄດ້ທຳລາຍຄົນອິສຣາເອນ
ທີ່ເຫລືອຢູ່ນັ້ນທັງໝົດ ໃນການທີ່ພຣະອົງໄດ້ລະບາຍຄວາມໂກດຮ້າຍຂອງພຣະອົງເໜືອເຢຣູ-
ຊາເລັມບໍ”
9ແລ້ວພຣະອົງກ່າວກັບຂ້າພະເຈົ້າວ່າ “ຄວາມຊົ່ວຊ້າຂອງເຊື້ອສາຍອິສຣາເອນ ແລະຢູດາ
ໃຫຍ່ຫລາຍ ແຜ່ນດິນກໍເຕັມໄປດ້ວຍເລືອດ ແລະຄວາມອະຍຸດຕິທຳກໍເຕັມເມືອງ ເພາະພວກ
ເຂົາກ່າວວ່າ ‘ພຣະຜູ້ເປັນເຈົ້າໄດ້ປະຖິ້ມແຜ່ນດິນນີ້ແລ້ວ ແລະພຣະຜູ້ເປັນເຈົ້າບໍ່ທອດພຣະເນດ
ເບິ່ງອີກ’ 10ສຳລັບເຮົາ ໃນຕາຂອງເຮົາຈະບໍ່ປານີ ແລະເຮົາຈະບໍ່ສົງສານ ແຕ່ເຮົາຈະຕອບແທນ
ຕາມການປະພຶດຂອງພວກເຂົາເທິງຫົວຂອງເຂົາທັງຫລາຍ”
11ແລະເບິ່ງແມ ຊາຍຄົນທີ່ນຸ່ງຫົ່ມຜ້າປ່ານຖືກ່ອງນ້ຳມຶກເຄື່ອງຂຽນນັ້ນ ໄດ້ນຳຖ້ອຍຄຳຂາບ
ທູນວ່າ “ຂ້າພະອົງໄດ້ເຮັດຕາມທີ່ພຣະອົງໄດ້ບັນຊາຂ້າພະອົງໄວ້ແລ້ວ”

# ບົດທີ 10

## ການໂຮຍໄຟແຫ່ງການແກ້ແຄ້ນເໜືອເມືອງເຢຣູຊາເລັມ

[1]ແລ້ວຂ້າພະເຈົ້າກໍເບິ່ງ ທ້ອງຟ້າຊຶ່ງຢູ່ເທິງຫົວຂອງເຫລົ່າເຄຣຸບ ມີສິ່ງປະກົດຂຶ້ນເທິງເຄຣຸບ
ນັ້ນເໝືອນແກ້ວນິລະກົດ ມີລັກສະນະຄ້າຍພຣະທີ່ນັ່ງ [2]ແລະພຣະອົງກ່າວກັບຊາຍທີ່ນຸ່ງຫົ່ມຜ້າ
ປ່ານວ່າ "ຈົ່ງເຂົ້າໄປໃນທ່າມກາງວົງລໍ້ຊຶ່ງຢູ່ພາຍໃຕ້ເຄຣຸບ ຈົ່ງເອົາມືກອບເອົາຖ່ານໄຟຈາກ
ທ່າມກາງເຫລົ່າເຄຣຸບ ນຳໄປໂຮຍເໜືອເມືອງນັ້ນ" ແລະຊາຍຄົນນັ້ນກໍເຂົ້າໄປຕໍ່ໜ້າຕໍ່ຕາຂອງ
ຂ້າພະເຈົ້າ

[3]ຝ່າຍເຫລົ່າເຄຣຸບນັ້ນຢືນຢູ່ດ້ານຂວາຂອງພຣະວິຫານ ຂະນະທີ່ຊາຍຄົນນັ້ນເຂົ້າໄປ ແລະ
ເມກກໍປົກຄຸມຢູ່ເຕັມລານຊັ້ນໃນ [4]ສະຫງ່າລາສີຂອງພຣະຜູ້ເປັນເຈົ້າກໍຂຶ້ນຈາກເຄຣຸບໄປຍັງປະຕູ
ພຣະວິຫານ ພຣະວິຫານນັ້ນກໍມີເມກປົກຄຸມຢູ່ເຕັມ ແລະເດີ່ນນັ້ນກໍເຕັມໄປດ້ວຍຄວາມສຸກໃສ
ແຫ່ງສະຫງ່າລາສີຂອງພຣະຜູ້ເປັນເຈົ້າ [5]ແລະສຽງປີກຂອງເຫລົ່າເຄຣຸບກໍໄດ້ຍິນໄປເຖິງເດີ່ນຊັ້ນ
ນອກ ເໝືອນພຣະສຸລະສຽງຂອງພຣະເຈົ້າຜູ້ມີລິດທານຸພາບເມື່ອພຣະອົງຊົງກ່າວ

[6]ແລະຕໍ່ມາ ເມື່ອພຣະອົງມີພຣະບັນຊາສັ່ງຊາຍທີ່ນຸ່ງຫົ່ມຜ້າປ່ານວ່າ "ຈົ່ງໄປເອົາໄຟມາຈາກ
ກາງວົງລໍ້ ແລະຈາກກາງເຫລົ່າເຄຣຸບ" ຊາຍຄົນນັ້ນກໍເຂົ້າໄປຢືນຢູ່ຂ້າງໆວົງລໍ້ເຫລົ່ານັ້ນ [7]ເຄ-
ຣຸບຕົນໜຶ່ງໄດ້ຍື່ນມືຂອງຕົນອອກມາລະຫວ່າງເຫລົ່າເຄຣຸບໄປຍັງໄຟຊຶ່ງຢູ່ລະຫວ່າງເຫລົ່າເຄຣຸບ
ຈັບໄຟ ຂຶ້ນມາເດ່ ແລະໃສ່ມືຂອງຊາຍທີ່ນຸ່ງຫົ່ມຜ້າປ່ານ ຊາຍນັ້ນກໍນຳໄຟອອກໄປ

## ສິ່ງທີ່ມີຊີວິດຢູ່ (ຄືເຄຣຸບ) ເປັນຕົວແທນພຣະເຈົ້າ

[8]ປາກົດວ່າໃນເຫລົ່າເຄຣຸບນັ້ນມີສິ່ງຢູ່ກ້ອງປີກເໝືອນກັບມືມະນຸດ

[9]ແລະຂ້າພະເຈົ້າເບິ່ງ ມີວົງລໍ້ຢູ່ສີ່ອັນຂ້າງໆເຫລົ່າເຄຣຸບ ຢູ່ຂ້າງເຄຣຸບຕົນລະໜຶ່ງວົງລໍ້ ລັກ-
ສະນະຂອງວົງລໍ້ນັ້ນເໝືອນກັບແສງພອຍຊຽວ [10]ລັກສະນະວົງລໍ້ທັງສີ່ນັ້ນກໍຄືກັນ ເໝືອນກັບວົງ
ລໍ້ຊ້ອນໃນວົງລໍ້ [11]ເມື່ອວົງລໍ້ນີ້ໄປ ກໍໄປໄດ້ຂ້າງໜຶ່ງຂ້າງໃດໃນຂ້າງທັງສີ່ ໂດຍບໍ່ຕ້ອງຫັນເລີຍ
ໃນເວລາໄປ ຖ້າອັນໜ້າມຸ່ງໜ້າໄປທາງໃດ ວົງລໍ້ອັນອື່ນກໍຕາມໄປໂດຍບໍ່ຕ້ອງຫັນໃນຂະນະທີ່ໄປ
[12]ແລະທັງຕົວ ດ້ານຫລັງ ມື ປີກ ແລະວົງລໍ້ມີໜ່ວຍຕາເຕັມຢູ່ຮອບ ທັງສີ່ນັ້ນກໍມີວົງລໍ້ຂອງຕົນ
[13]ວົງລໍ້ເຫລົ່ານັ້ນ ທີ່ຂ້າພະເຈົ້າໄດ້ຍິນກັບຫູ ເຂົາເອີ້ນວ່າ "ວົງລໍ້ກັງຫັນ" [14]ມີໜ້າສີ່ໜ້າທັງໝົດ
ໜ້າທຳອິດເປັນໜ້າເຄຣຸບ ໜ້າທີ່ສອງເປັນໜ້າມະນຸດ ແລະໜ້າທີ່ສາມເປັນໜ້າໂຕສິງ ແລະທີ່ສີ່
ເປັນໜ້ານົກອິນຊີ

[15]ແລ້ວເຫລົ່າເຄຣຸບກໍເຫາະຂຶ້ນ ເປັນສິ່ງທີ່ມີຊີວິດຢູ່ທີ່ຂ້າພະເຈົ້າເຄີຍເຫັນຢູ່ແຄມແມ່ນ້ຳເກບາ
[16]ເມື່ອເຫລົ່າເຄຣຸບໄປ ວົງລໍ້ກໍຕາມຂ້າງໄປດ້ວຍ ແລະເມື່ອເຫລົ່າເຄຣຸບກາງປີກອອກເພື່ອຈະບິນ
ຂຶ້ນຈາກໂລກ ວົງລໍ້ເຫລົ່ານັ້ນກໍບໍ່ຫັນໄປຈາກຂ້າງເຫລົ່າເຄຣຸບເລີຍ [17]ເມື່ອເຫລົ່າເຄຣຸບຢຸດຢູ່ ວົງ
ລໍ້ກໍຢຸດຢູ່ ເມື່ອເຫລົ່າເຄຣຸບເຫາະຂຶ້ນ ວົງລໍ້ກໍເຫາະຂຶ້ນໄປດ້ວຍ ເພາະວ່າວິນຍານຂອງສິ່ງທີ່ມີຊີ-
ວິດຢູ່ນັ້ນຢູ່ໃນວົງລໍ້

[18]ແລ້ວສະຫງ່າລາສີຂອງພຣະຜູ້ເປັນເຈົ້າໄດ້ໄປຈາກປະຕູພຣະວິຫານ ສະຖິດເໜືອເຫລົ່າ
ເຄຣຸບ [19]ເມື່ອເຫລົ່າເຄຣຸບອອກໄປກໍກາງປີກອອກບິນຂຶ້ນໄປຈາກໂລກຕໍ່ໜ້າຕໍ່ຕາຂອງຂ້າພະ-

ເຈົ້າ ວົງລໍ້ກໍຕາມຂ້າງໄປດ້ວຍ ແລະໄປຢືນຢູ່ທີ່ທາງເຂົ້າປະຕູດ້ານຕາເວັນອອກຂອງພຣະວິຫານ
ແຫ່ງ ພຣະຜູ້ເປັນເຈົ້າ ສະຫງ່າລາສີຂອງ ພຣະເຈົ້າ ແຫ່ງ ອິສຣາເອນ ກໍຢູ່ເໜືອເຄຣຸບເຫລົ່ານັ້ນ
[20]ເຫລົ່ານີ້ເປັນສິ່ງທີ່ມີຊີວິດຢູ່ ຊຶ່ງຂ້າພະເຈົ້າໄດ້ເຫັນພາຍໃຕ້ ພຣະເຈົ້າ ແຫ່ງ ອິສຣາເອນ ທີ່
ແຄມແມ່ນໍ້າ ເກບາ ແລະຂ້າພະເຈົ້າຮູ້ວ່າ ເປັນເຫລົ່າເຄຣຸບ [21]ເຄຣຸບທຸກຕົນມີສີ່ໜ້າ ແລະສີ່ປີກ
ກ້ອງປີກມີລັກສະນະເໝືອນມືມະນຸດ [22]ສ່ວນລັກສະນະຂອງໜ້ານັ້ນ ເປັນໜ້າທັງຮູບທັງຕົວ ຊຶ່ງ
ຂ້າພະເຈົ້າໄດ້ເຫັນທີ່ແຄມແມ່ນໍ້າ ເກບາ ເຄຣຸບທຸກຕົນອອກຊື່ໄປຂ້າງໜ້າຂອງຕົນ

# ບົດທີ 11

## ພຣະເຈົ້າໄດ້ພຣະພິໂລດພວກເຈົ້ານາຍທີ່ຂີ້ຕົວະ

[1]ພຣະວິນຍານ ໄດ້ຍົກຂ້າພະເຈົ້າຂຶ້ນ ແລະນຳຂ້າພະເຈົ້າມາຍັງປະຕູດ້ານຕາເວັນອອກຂອງ
ພຣະວິຫານ ແຫ່ງ ພຣະຜູ້ເປັນເຈົ້າ ຊຶ່ງຫັນໜ້າໄປທິດຕາເວັນອອກ ເບິ່ງແມ ຢູ່ທາງເຂົ້າປະຕູມີຜູ້
ຊາຍຢູ່ຊາວຫ້າຄົນ ແລະ ໃນທ່າມກາງ ນັ້ນ ຂ້າພະເຈົ້າ ເຫັນ ຢາອາຊານີຢາ ລູກຊາຍ ອັດຊູເຣ
ແລະ ເປລາຕີຢາ ລູກຊາຍ ເບນາຢາ ເຈົ້ານາຍແຫ່ງປະຊາຊົນ [2]ແລະພຣະອົງຊົງກ່າວກັບຂ້າພະ-
ເຈົ້າວ່າ “ບຸດແຫ່ງມະນຸດເອີຍ ຄົນເຫລົ່ານີ້ຄືຜູ້ທີ່ອອກອຸບາຍເຮັດຄວາມຜິດບາບ ແລະເປັນຜູ້ໃຫ້
ຄຳປຶກສາຊົ່ວຮ້າຍໃນ ເມືອງນີ້ [3]ຜູ້ກ່າວວ່າ ‘ເວລາຍັງບໍ່ມາໃກ້ເທື່ອ ຈົ່ງໃຫ້ເຮົາປຸກເຮືອນສາ
ເມືອງນີ້ເປັນໝໍ້ຕົ້ມ ແລະເຮົາເປັນຊີ້ນ’ [4]ບຸດແຫ່ງມະນຸດເອີຍ ເພາະສະນັ້ນ ຈົ່ງປະກາດພຣະທຳ
ກ່າວໂທດພວກເຂົາ ຈົ່ງປະກາດພຣະທຳ”
[5]ພຣະວິນຍານ ຂອງ ພຣະຜູ້ເປັນເຈົ້າ ລົງມາປະທັບ ເທິງຂ້າພະເຈົ້າ ແລະພຣະອົງກ່າວກັບຂ້າ-
ພະເຈົ້າວ່າ “ຈົ່ງກ່າວວ່າ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເຊື້ອສາຍ ອິສຣາເອນ ເອີຍ ເຈົ້າຄິດດັ່ງ-
ນັ້ນ ແລະເຮົາຮູ້ສິ່ງທັງຫລາຍທີ່ເຂົ້າມາໃນໃຈຂອງເຈົ້າ [6]ເຈົ້າໄດ້ເພີ່ມທະວີຄົນທີ່ເຈົ້າໄດ້ຂ້າໃນ
ເມືອງນີ້ ແລະຖິ້ມຄົນທີ່ຖືກຂ້າຕາຍເຕັມຕາມຖະໜົນຫົນທາງໄປໝົດ [7]ເພາະສະນັ້ນ ອົງ ພຣະຜູ້-
ເປັນເຈົ້າ ພຣະເຈົ້າ ຈຶ່ງກ່າວດັ່ງນີ້ວ່າ ບັນດາຜູ້ທີ່ ເຈົ້າ ໄດ້ຂ້າຊຶ່ງ ເຈົ້າ ໄດ້ຖິ້ມໄວ້ທ່າມກາງ ເມືອງນີ້
ພວກເຂົາທັງຫລາຍເປັນຊີ້ນ ແລະເມືອງນີ້ກາຍເປັນໝໍ້ຕົ້ມ ແຕ່ເຮົາຈະນຳເຈົ້າອອກມາຈາກທ່າມ-
ກາງບ່ອນນັ້ນ [8]ອົງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ກ່າວວ່າ ເຈົ້າຢ້ານດາບ ແລະເຮົາຈະນຳດາບມາ
ເໜືອເຈົ້າ [9]ເຮົາຈະນຳເຈົ້າອອກມາຈາກທ່າມກາງບ່ອນນັ້ນ ແລະມອບເຈົ້າໄວ້ໃນມືຂອງຄົນຕ່າງ
ດ້າວ ແລະຈະເຮັດການພິພາກສາລົງໂທດເຈົ້າ [10]ເຈົ້າຈະຖືກດາບລົ້ມລົງ ເຮົາຈະລົງໂທດເຈົ້າທີ່
ຊາຍແດນ ອິສຣາເອນ ແລະ ເຈົ້າຈະໄດ້ຮູ້ວ່າເຮົາແມ່ນ ພຣະຜູ້ເປັນເຈົ້າ [11]ເມືອງນີ້ຈະບໍ່ແມ່ນໝໍ້
ຕົ້ມຂອງເຈົ້າ ທີ່ເຈົ້າຈະເປັນຊີ້ນໃນທ່າມກາງນັ້ນ ເຮົາຈະລົງໂທດເຈົ້າໃນຊາຍແດນ ອິສຣາເອນ
[12]ແລະເຈົ້າຈະຮູ້ວ່າເຮົາແມ່ນ ພຣະຜູ້ເປັນເຈົ້າ ເພາະເຈົ້າບໍ່ໄດ້ດຳເນີນຕາມກົດເກນຂອງເຮົາ ຫລື
ປະຕິບັດຕາມຂໍ້ຕັດສິນຂອງເຮົາ ແຕ່ໄດ້ປະພຶດຕາມລັກສະນະທ່າທາງຂອງປະຊາຊາດທັງຫລາຍ
ທີ່ຢູ່ອ້ອມຮອບເຈົ້າ”
[13]ຕໍ່ມາ ເມື່ອຂ້າພະເຈົ້າກຳລັງປະກາດພຣະທຳຢູ່ ເປລາຕີຢາ ລູກຊາຍ ເບນາຢາ ກໍສິ້ນຊີວິດ
ແລ້ວຂ້າພະເຈົ້າກໍກົ້ມໜ້າລົງ ເຖິງດິນຮ້ອງສຽງດັງວ່າ “ອົງ ພຣະຜູ້ເປັນເຈົ້າ ພຣະອົງຈະເຮັດໃຫ້

ຄົນອິສຣາເອນທີ່ເຫລືອຢູ່ນັ້ນສິ້ນສຸດເລີຍບໍ ພຣະເຈົ້າຂ້າ”

## ຄົນສັດຊື່ບາງຄົນຈະໄດ້ລອດພົ້ນ

14ພຣະທຳຂອງ ພຣະຜູ້ເປັນເຈົ້າ ມາເຖິງຂ້າພະເຈົ້າອີກວ່າ 15“ບຸດແຫ່ງມະນຸດເອີຍ ພີ່ນ້ອງ
ຂອງເຈົ້າ ຄືພີ່ນ້ອງຂອງເຈົ້າເອງ ຄືຜູ້ທີ່ມີສິດໄຖ່ຄືນ ທັງເຊື້ອສາຍອິສຣາເອນທັງໝົດ ຄືບຸກຄົນ
ທີ່ຊາວ ເຢຣູຊາເລັມ ໄດ້ກ່າວວ່າ ‘ເຈົ້າທັງຫລາຍຈົ່ງເຫີນຫ່າງໄປຈາກພຣະຜູ້ເປັນເຈົ້າ ແຜ່ນດິນນີ້
ໄດ້ມອບໄວ້ແກ່ເຮົາເປັນກຳມະສິດ’

16ເພາະສະນັ້ນ ຈົ່ງກ່າວວ່າ ‘ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ ແມ່ນເຮົາໄດ້ຍ້າຍ
ພວກເຂົາໃຫ້ຫ່າງອອກໄປຢູ່ທ່າມກາງປະຊາຊາດທັງຫລາຍ ແມ່ນເຮົາໄດ້ກະຈາຍພວກເຂົາໄປຢູ່
ທ່າມກາງປະເທດທັງປວງ ເຮົາກໍຈະເປັນສະຖານທີ່ບໍລິສຸດອັນນ້ອຍສຳລັບພວກເຂົາໃນປະເທດ
ທີ່ພວກເຂົາຈະໄດ້ໄປຢູ່’

## ອິສຣາເອນຈະກັບຄືນມາ ແລະຮັບຄວາມພົ້ນ

17ເພາະສະນັ້ນ ຈົ່ງກ່າວວ່າ ‘ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ ເຮົາຈະຮວບຮວມ
ເຈົ້າມາຈາກຊົນຊາດທັງຫລາຍ ແລະເຕົ້າໂຮມເຈົ້າຈາກປະເທດທີ່ເຈົ້າກະຈັດກະຈາຍໄປຢູ່ນັ້ນ
ແລະເຮົາຈະມອບແຜ່ນດິນອິສຣາເອນໃຫ້ແກ່ເຈົ້າ’

18ເມື່ອພວກເຂົາມາຢູ່ບ່ອນນັ້ນ ພວກເຂົາຈະຮື້ສິ່ງທີ່ໜ້າກຽດຊັງຂອງເມືອງນັ້ນທັງໝົດ ແລະສິ
ລາຂອງເມືອງນັ້ນທັງໝົດອອກໄປເສຍ 19ແລະເຮົາຈະໃຫ້ຈິດໃຈດຽວແກ່ພວກເຂົາ ເຮົາຈະບັນຈຸ
ຈິດວິນຍານໃໝ່ໄວ້ໃນເຈົ້າ ເຮົາຈະນຳໃຈຫີນອອກໄປເສຍຈາກເນື້ອໜັງຂອງພວກເຂົາ ແລະຈະ
ໃຫ້ໃຈທີ່ເປັນຊີ້ນແກ່ເຂົາ 20ເພື່ອພວກເຂົາຈະດຳເນີນຕາມກົດເກນຂອງເຮົາ ແລະຮັກສາກົດຂອງ
ເຮົາໂດຍເຮັດຕາມ ພວກເຂົາທັງຫລາຍຈະເປັນປະຊາຊົນຂອງເຮົາ ແລະເຮົາຈະເປັນພຣະເຈົ້າ
ຂອງພວກເຂົາ 21ແຕ່ບຸກຄົນເຫລົ່ານັ້ນທີ່ຈິດໃຈຂອງເຂົາດຳເນີນຕາມຈິດໃຈທີ່ໜ້າກຽດຊັງ ແລະ
ສິ່ງທີ່ໜ້າກຽດຊັງຂອງເຂົາ ເຮົາຈະຕອບແທນໃຫ້ສົມກັບການປະພຶດຂອງພວກເຂົາເໜືອຫົວຂອງ
ເຂົາເອງ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ແຫລະ”

22ແລ້ວເຫລົ່າເຄຣຸບກໍກາງປີກອອກ ວົງລໍ້ກໍຢູ່ຂ້າງໆ ແລະສະຫງ່າລາສີຂອງພຣະເຈົ້າແຫ່ງ
ອິສຣາເອນກໍຢູ່ເໜືອສິ່ງເຫລົ່ານັ້ນ 23ສະຫງ່າລາສີຂອງພຣະຜູ້ເປັນເຈົ້າຂຶ້ນໄປຈາກກາງເມືອງ
ໄປສະຖິດຢູ່ເທິງພູເຂົາ ຊຶ່ງຢູ່ທາງດ້ານຕາເວັນອອກຂອງເມືອງນັ້ນ 24ຕໍ່ມາ ພຣະວິນຍານໄດ້
ຍົກຂ້າພະເຈົ້າຂຶ້ນ ແລະນຳຂ້າພະເຈົ້າມາດ້ວຍນິມິດໂດຍພຣະວິນຍານຂອງພຣະເຈົ້າເຖິງເມືອງ
ບາບີໂລນ ມາສູ່ພວກທີ່ຖືກກວາດໄປເປັນຊະເລີຍ ແລ້ວນິມິດທີ່ຂ້າພະເຈົ້າໄດ້ເຫັນນັ້ນກໍຂຶ້ນໄປ
ຈາກຂ້າພະເຈົ້າ

25ຂ້າພະເຈົ້າຈຶ່ງໄດ້ບອກເຖິງສິ່ງຕ່າງໆຊຶ່ງພຣະຜູ້ເປັນເຈົ້າໄດ້ສະແດງແກ່ຂ້າພະເຈົ້າໃຫ້ພວກ
ທີ່ຖືກກວາດໄປເປັນຊະເລີຍຮູ້

# ບົດທີ 12

## ໝາຍສຳຄັນເຖິງເວລາທີ່ຢູດາອອກຈາກເຢຣູຊາເລັມ

1ພຣະທຳຂອງ ພຣະຜູ້ເປັນເຈົ້າ ມາເຖິງຂ້າພະເຈົ້າວ່າ 2"ບຸດແຫ່ງມະນຸດເອີຍ ເຈົ້າອາໄສຢູ່
ທ່າມກາງເຊື້ອສາຍທີ່ມັກກະບົດ ຜູ້ມີຕາເພື່ອເບິ່ງ ແຕ່ເບິ່ງບໍ່ເຫັນ ຜູ້ມີຫູເພື່ອຟັງ ແຕ່ຟັງບໍ່ໄດ້ຍິນ
ເພາະພວກເຂົາເປັນເຊື້ອສາຍທີ່ມັກກະບົດ

3ເພາະສະນັ້ນ ບຸດແຫ່ງມະນຸດເອີຍ ເຈົ້າຈົ່ງຈັດຕຽມເຄື່ອງຂອງສຳລັບຕົນເພື່ອການຖືກກວາດ
ໄປເປັນຊະເລີຍ ແລະຈົ່ງໄປເປັນຊະເລີຍໃນເວລາກາງເວັນຕໍ່ໜ້າຕໍ່ຕາຂອງພວກເຂົາ ເຈົ້າຈະ
ຕ້ອງໄປເປັນຊະເລີຍຈາກສະຖານທີ່ຂອງເຈົ້າໄປຍັງອີກບ່ອນໜຶ່ງຕໍ່ໜ້າຕໍ່ຕາຂອງພວກເຂົາ ບາງ-
ທີພວກເຂົາອາດຈະພິຈາລະນາຕົນ ເຖິງແມ່ນວ່າພວກເຂົາເປັນເຊື້ອສາຍທີ່ມັກກະບົດ 4ເຈົ້າຈົ່ງ
ນຳສິ່ງຂອງຂອງເຈົ້າອອກມາໃນກາງເວັນຕໍ່ໜ້າຕໍ່ຕາພວກເຂົາ ຄືສິ່ງຂອງເພື່ອການຖືກກວາດໄປ
ເປັນຊະເລີຍ ໃນຕອນຄ່ຳ ເຈົ້າຈົ່ງອອກໄປຕໍ່ໜ້າພວກເຂົາ ອອກໄປເໝືອນຜູ້ຖືກກວາດໄປເປັນ
ຊະເລີຍ 5ຈົ່ງເຈາະກຳແພງຕໍ່ໜ້າພວກເຂົາ ແລ້ວອອກໄປຕາມຮູກຳແພງນັ້ນ 6ຈົ່ງຍົກເຄື່ອງຂອງ
ໃສ່ບ່າຂອງເຈົ້າຕໍ່ໜ້າພວກເຂົາ ແລ້ວແບກອອກໄປໃນເວລາມືດ ເຈົ້າຈົ່ງປົກໜ້າ ຢ່າໃຫ້ເຫັນ
ແຜ່ນດິນ ເພາະເຮົາຕັ້ງເຈົ້າໃຫ້ເປັນໝາຍສຳຄັນແກ່ເຊື້ອສາຍ ອິສຣາເອນ"

7ຂ້າພະເຈົ້າກໍເຮັດຕາມທີ່ຂ້າພະເຈົ້າຮັບບັນຊາມາ ຂ້າພະເຈົ້ານຳເຄື່ອງຂອງອອກມາໃນເວລາ
ກາງເວັນ ເໝືອນດັ່ງເຄື່ອງຂອງເພື່ອການຖືກກວາດໄປເປັນຊະເລີຍ ໃນຕອນຄ່ຳ ຂ້າພະເຈົ້າກໍ
ເຈາະກຳແພງດ້ວຍມືຂອງຂ້າພະເຈົ້າເອງ ຂ້າພະເຈົ້າອອກໄປໃນເວລາມືດ ແບກເຄື່ອງຂອງ
ຂ້າພະເຈົ້າໄປຕໍ່ໜ້າພວກເຂົາ

8ໃນຕອນເຊົ້າ ພຣະທຳຂອງ ພຣະຜູ້ເປັນເຈົ້າ ມາເຖິງຂ້າພະເຈົ້າວ່າ 9"ບຸດແຫ່ງມະນຸດເອີຍ
ເຊື້ອສາຍ ອິສຣາເອນ ຄືເຊື້ອສາຍທີ່ມັກກະບົດນັ້ນ ໄດ້ເວົ້າກັບເຈົ້າບໍ່ແມ່ນບໍວ່າ 'ເຈົ້າເຮັດຫຍັງ'
10ຈົ່ງກ່າວແກ່ພວກເຂົາວ່າ 'ອົງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ກ່າວດັ່ງນີ້ວ່າ ພຣະໂອວາດກ່ຽວກັບ
ເຈົ້ານາຍຄົນນັ້ນໃນ ເຢຣູຊາເລັມ ແລະເຊື້ອສາຍ ອິສຣາເອນ ທັງໝົດຊຶ່ງຢູ່ໃນເມືອງນັ້ນ' 11ຈົ່ງ
ກ່າວວ່າ 'ຂ້າພະເຈົ້າເປັນໝາຍສຳຄັນສຳລັບທ່ານ ທີ່ຂ້າພະເຈົ້າໄດ້ເຮັດແລ້ວນີ້ ພວກເຂົາທັງ-
ຫລາຍຈະຖືກປະຕິບັດຢ່າງດຽວກັນ ພວກເຂົາຈະຖືກກວາດໄປເປັນຊະເລີຍ'

12ແລະເຈົ້ານາຍຄົນນັ້ນຜູ້ຢູ່ທ່າມກາງພວກເຂົາ ຈະຍົກເຄື່ອງຂອງຂຶ້ນໃສ່ບ່າໃນເວລາມືດ
ແລະອອກໄປ ພວກເຂົາທັງຫລາຍຈະເຈາະກຳແພງ ແລະນຳອອກໄປທາງນັ້ນ ເພິ່ນຈະປົກໜ້າ
ຂອງຕົນ ເພື່ອວ່າເພິ່ນຈະບໍ່ແນມເຫັນແຜ່ນດິນດ້ວຍຕາຂອງເພິ່ນເອງ 13ແລະເຮົາຈະກາງແຫ
ຂອງເຮົາປົກເພິ່ນ ແລະເພິ່ນຈະຕິດກັບເຮົາ ແລະເຮົາຈະນຳເພິ່ນເຂົ້າໄປໃນ ບາບີໂລນ ແຜ່ນດິນ
ຂອງຄົນ ບາບີໂລນ ເຖິງປານນັ້ນ ເພິ່ນຈະຍັງແນມບໍ່ເຫັນແຜ່ນດິນນັ້ນ ແລະຈະຕ້ອງຕາຍຢູ່
ບ່ອນນັ້ນ 14ບັນດາຜູ້ທີ່ຢູ່ຮອບເພິ່ນນັ້ນ ເຮົາຈະກະຈາຍພວກເຂົາໄປຕາມລົມທຸກທິດ ລວມທັງຜູ້
ຊ່ວຍ ແລະບັນດາກອງທັບຂອງເພິ່ນດ້ວຍ ແລະເຮົາຈະຖອດດາບອອກໄລ່ຕາມພວກເຂົາໄປ

15ເມື່ອເຮົາໃຫ້ພວກເຂົາກະຈັດກະຈາຍໄປຢູ່ທ່າມກາງປະຊາຊາດ ແລະກະຈາຍພວກເຂົາໄປ
ຕາມປະເທດຕ່າງໆ ພວກເຂົາຈຶ່ງຈະຮູ້ວ່າ ເຮົາແມ່ນ ພຣະຜູ້ເປັນເຈົ້າ 16ແຕ່ເຮົາຈະໃຫ້ພວກເຂົາ

ບາງຄົນພົ້ນຈາກດາບ ຈາກການອຶດຢາກອາຫານ ແລະຈາກພະຍາດລະບາດ ເພື່ອພວກເຂົາຈະ
ໄດ້ເລົ່າເລື່ອງອັນໜ້າກຽດຊັງທັງໝົດຂອງເຂົາທ່າມກາງປະຊາຊາດຊຶ່ງພວກເຂົາໄປຢູ່ນັ້ນ ແລະ
ພວກເຂົາຈະຮູ້ວ່າເຮົາແມ່ນພຣະຜູ້ເປັນເຈົ້າ"

## ການເປັນຊະເລີຍ ແລະການຮົກຮ້າງໃກ້ເຂົ້າມາແລ້ວ

17ພຣະທຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າອີກວ່າ 18"ບຸດແຫ່ງມະນຸດເອີຍ ຈົ່ງຮັບປະ-
ທານອາຫານຂອງເຈົ້າດ້ວຍຕົວສັ່ນ ແລະດື່ມນໍ້າດ້ວຍຄວາມສະທົກສະທ້ານແລະດ້ວຍຄວາມ
ລະມັດລະວັງ 19ແລະກ່າວແກ່ປະຊາຊົນແຫ່ງແຜ່ນດິນວ່າ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວ
ດັ່ງນີ້ກ່ຽວກັບຊາວເຢຣູຊາເລັມ ແລະກ່ຽວກັບແຜ່ນດິນອິສຣາເອນວ່າ ພວກເຂົາຈະຮັບປະທານ
ອາຫານຂອງຕົນດ້ວຍຄວາມລະມັດລະວັງ ແລະດື່ມນໍ້າດ້ວຍເອົາສັ່ນຂວັນເສຍ ເພາະວ່າສາລະ-
ພັດທີ່ມີຢູ່ໃນແຜ່ນດິນຂອງພວກເຂົາຈະຕ້ອງຖືກປຸ້ນໄປ ເນື່ອງດ້ວຍຄວາມຮຸນແຮງຂອງຄົນທັງ
ປວງທີ່ຢູ່ໃນແຜ່ນດິນນັ້ນ 20ແລະເມືອງທີ່ມີຄົນອາໄສຢູ່ຈະຮ້າງເປົ່າ ແລະແຜ່ນດິນນັ້ນກໍຈະຮ້າງ
ເປົ່າ ແລະເຈົ້າຈະຮູ້ວ່າເຮົາແມ່ນພຣະຜູ້ເປັນເຈົ້າ"

21ພຣະທຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າວ່າ 22"ບຸດແຫ່ງມະນຸດເອີຍ ສຸພາສິດຊຶ່ງ
ເຈົ້າທັງຫລາຍກ່າວເຖິງແຜ່ນດິນອິສຣາເອນວ່າ 'ວັນນັ້ນກໍໄກອອກໄປ ແລະນິມິດທຸກເລື່ອງກໍ
ດັບແລ້ວ' ນັ້ນ ເຈົ້າໝາຍຄວາມວ່າຢ່າງໃດ 23ເພາະສະນັ້ນ ຈົ່ງບອກພວກເຂົາວ່າ 'ອົງພຣະຜູ້-
ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ ເຮົາຈະໃຫ້ສຸພາສິດບົດນີ້ສິ້ນສຸດລົງ ພວກເຂົາຈະບໍ່ໃຊ້ເປັນສຸ-
ພາສິດອີກໃນອິສຣາເອນ ແຕ່ຈົ່ງກ່າວແກ່ພວກເຂົາວ່າ ວັນນັ້ນກໍໃກ້ເຂົ້າມາ ແລະນິມິດທຸກ
ເລື່ອງກໍຈະສຳເລັດ 24ເພາະຈະບໍ່ມີນິມິດປອມ ຫລືຄຳທຳນວຍທີ່ເວົ້າເອົາໃຈຄົນໃນເຊື້ອສາຍອິ-
ສຣາເອນອີກແລ້ວ 25ແຕ່ເຮົາແມ່ນພຣະຜູ້ເປັນເຈົ້າຈະເວົ້າຄຳທີ່ເຮົາຈະເວົ້າ ແລະຈະຕ້ອງເປັນ
ໄປຕາມຄຳນັ້ນ ຈະບໍ່ຊັກຊ້າຕໍ່ໄປອີກ ແຕ່ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວວ່າ ເຊື້ອສາຍທີ່ມັກ
ກະບົດເອີຍ ໃນສະໄໝຂອງເຈົ້ານີ້ແຫລະ ເຮົາຈະລັ່ນຄຳເວົ້າ ແລະຈະເຮັດຕາມນັ້ນ'"

26ພຣະທຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າອີກວ່າ 27"ເບິ່ງແມ ບຸດແຫ່ງມະນຸດເອີຍ
ເຊື້ອສາຍຂອງອິສຣາເອນກ່າວວ່າ 'ນິມິດທີ່ລາວເຫັນ ຍັງອີກຫລາຍວັນຂ້າງໜ້າຈະບັງເກີດມາ
ແລະລາວປະກາດພຣະທຳເຖິງເວລາທີ່ຍັງຫ່າງໄກນັ້ນ' 28ເພາະສະນັ້ນ ຈົ່ງກ່າວແກ່ພວກເຂົາວ່າ
ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ ບັນດາຖ້ອຍຄຳຂອງເຮົາຈະບໍ່ຊັກຊ້າອີກຕໍ່ໄປ ແຕ່ຄຳ
ເວົ້າທີ່ເຮົາລັ່ນອອກມານັ້ນຈະຕ້ອງເປັນໄປແທ້ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ແຫລະ"

# ບົດທີ 13

## ບັນດາຜູ້ປະກາດພຣະທຳບໍ່ຈິງຕ້ອງລະວັງຕົວ

1ພຣະທຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າວ່າ 2"ບຸດແຫ່ງມະນຸດເອີຍ ເຈົ້າຈົ່ງທຳນວຍ
ກ່າວໂທດ ຜູ້ປະກາດພຣະທຳຂອງອິສຣາເອນ ແລະກ່າວແກ່ຄົນເຫລົ່ານັ້ນທີ່ປະກາດພຣະທຳ
ຕາມໃຈຂອງຕົນວ່າ 'ຈົ່ງຟັງພຣະທຳຂອງພຣະຜູ້ເປັນເຈົ້າ' 3ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວ
ດັ່ງນີ້ວ່າ ວິບັດແກ່ຜູ້ປະກາດພຣະທຳໂງ່ຈ້າ ຜູ້ຕິດຕາມວິນຍານຂອງຕົນເອງ ແລະບໍ່ເຄີຍໄດ້ເຫັນ

ຫຍັງເລີຍ [4]ໂອ ອິສຣາເອນເອີຍ ຜູ້ປະກາດພຣະທຳຂອງເຈົ້າເປັນເໝືອນດັ່ງໝາຈິ້ງຈອກຢູ່ໃນ
ທ່າມກາງສິ່ງທີ່ຮົກຮ້າງເພພັງ [5]ເຈົ້າບໍ່ໄດ້ຂຶ້ນໄປເຖິງປ່ອງທີ່ແຕກ ແລະບໍ່ໄດ້ສ້າງກຳແພງເພື່ອ
ເຊື້ອສາຍອິສຣາເອນ ເພື່ອໃຫ້ຕັ້ງຢູ່ໄດ້ໃນສົງຄາມໃນວັນແຫ່ງພຣະຜູ້ເປັນເຈົ້າ [6]ພວກເຂົາເຫັນ
ນິມິດບໍ່ຈິງ ແລະທຳນວຍຂີ້ຕົວະ ພວກເຂົາກ່າວວ່າ 'ພຣະຜູ້ເປັນເຈົ້າກ່າວວ່າ' ໃນຂະນະທີ່
ພຣະຜູ້ເປັນເຈົ້າບໍ່ໄດ້ໃຊ້ເຂົາໄປ ພວກເຂົາເຮັດໃຫ້ຄົນອື່ນຫວັງວ່າຈະສຳເລັດຕາມຖ້ອຍຄຳຂອງ
ຕົນ [7]ເຈົ້າເຄີຍເຫັນນິມິດບໍ່ຈິງ ແລະເຄີຍທຳນວຍຂີ້ຕົວະບໍ່ແມ່ນບໍ ເພາະເຈົ້າກ່າວວ່າ 'ພຣະຜູ້-
ເປັນເຈົ້າກ່າວວ່າ' ທັງທີ່ເຮົາບໍ່ໄດ້ເວົ້າຫຍັງເລີຍ"

[8]ເພາະສະນັ້ນ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ "ເພາະເຈົ້າກ່າວບໍ່ຈິງ ແລະໄດ້
ເຫັນນິມິດຂີ້ຕົວະ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວວ່າ ເບິ່ງແມ ເຮົາເປັນສັດຕູກັບເຈົ້າ [9]ມື
ຂອງເຮົາຈະຕໍ່ສູ້ຜູ້ປະກາດພຣະທຳຜູ້ເຫັນນິມິດບໍ່ຈິງແລະຜູ້ໃຫ້ຄຳທຳນວຍຂີ້ຕົວະ ພວກເຂົາຈະບໍ່
ໄດ້ເຂົ້າຢູ່ໃນສະພາແຫ່ງປະຊາຊົນຂອງເຮົາ ຫລືຂຶ້ນທະບຽນຢູ່ໃນທະບຽນຂອງເຊື້ອສາຍອິສຣາ-
ເອນ ແລະພວກເຂົາຈະບໍ່ໄດ້ເຂົ້າໃນແຜ່ນດິນອິສຣາເອນ ແລະເຈົ້າຈະຮູ້ວ່າເຮົາແມ່ນອົງພຣະ-
ຜູ້ເປັນເຈົ້າ

[10]ເພາະວ່າພວກເຂົາໄດ້ນຳພາປະຊາຊົນຂອງເຮົາໃຫ້ຫລົງໄປ ໂດຍກ່າວວ່າ 'ສັນຕິສຸກ' ເມື່ອ
ບໍ່ມີສັນຕິສຸກເລີຍ ແລະເພາະວ່າເມື່ອມີຄົນສ້າງກຳແພງ ເບິ່ງແມ ຄົນອື່ນກໍໂບກດ້ວຍປູນຂາວ
[11]ຈົ່ງກ່າວແກ່ຜູ້ທີ່ສາບປູນຂາວນັ້ນວ່າ ກຳແພງນັ້ນຈະພັງ ຈະມີຝົນຕົກນໍ້າຖ້ວມ ແລະໝາກເຫັບ
ໃຫຍ່ຈະຕົກລົງມາ ແລະລົມພາຍຸຈະຈີກມັນ [12]ເບິ່ງແມ ເມື່ອກຳແພງເພພັງ ພວກເຂົາຈະບໍ່ເວົ້າ
ກັບທ່ານບໍວ່າ 'ປູນຂາວທີ່ເຈົ້າໄດ້ສາບນັ້ນຢູ່ທີ່ໃດ'

[13]ເພາະສະນັ້ນ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ ເຮົາຈະເຮັດໃຫ້ລົມພາຍຸຈີກມັນ
ດ້ວຍຄວາມໂກດຮ້າຍຂອງເຮົາ ແລະດ້ວຍຄວາມຮ້າຍຂອງເຮົາຈະມີຝົນຕົກນໍ້າຖ້ວມ ດ້ວຍ
ຄວາມຄຽດຮ້າຍຂອງເຮົາຈະມີໝາກເຫັບໃຫຍ່ທຳລາຍເສຍ [14]ເຮົາຈະພັງກຳແພງຊຶ່ງເຈົ້າໂບກ
ດ້ວຍປູນຂາວນັ້ນ ແລະໃຫ້ເພພັງເຖິງດິນ ຮາກກຳແພງນັ້ນຈຶ່ງຈະປາກົດ ເມື່ອກຳແພງພັງ ເຈົ້າ
ທັງຫລາຍຈະພິນາດຢູ່ໃນກາງກຳແພງ ແລະເຈົ້າຈະຮູ້ວ່າເຮົາແມ່ນພຣະຜູ້ເປັນເຈົ້າ [15]ເຮົາຈະໃຫ້
ຄວາມພິໂລດຂອງເຮົາສຳເລັດເທິງກຳແພງແລະເທິງຄົນເຫລົ່ານັ້ນທີ່ສາບກຳແພງດ້ວຍປູນຂາວ
ແລະເຮົາຈະເວົ້າກັບເຈົ້າວ່າ 'ກຳແພງບໍ່ມີອີກແລ້ວ ຜູ້ໂບກປູນຂາວກໍບໍ່ມີ' [16]ຄືຜູ້ປະກາດພຣະທຳ
ແຫ່ງອິສຣາເອນຊຶ່ງປະກາດພຣະທຳກ່ຽວກັບກຸງເຢຣູຊາເລັມ ແລະໄດ້ເຫັນນິມິດແຫ່ງສັນຕິສຸກ
ຂອງເມືອງນັ້ນ ທັງທີ່ບໍ່ມີສັນຕິສຸກ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ແຫລະ

[17]ບຸດແຫ່ງມະນຸດເອີຍ ເຈົ້າຈົ່ງມຸ່ງໜ້າຕໍ່ສູ້ບັນດາລູກສາວແຫ່ງຊົນຊາດຂອງເຈົ້າຜູ້ປະກາດ
ພຣະທຳຕາມໃຈຂອງຕົນເອງ ຈົ່ງປະກາດພຣະທຳກ່າວໂທດພວກເຂົາ [18]ແລະກ່າວວ່າ ອົງ
ພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ ວິບັດແກ່ຜູ້ຍິງທີ່ຫຍິບຜ້າຍັນໃສ່ແຂນເສື້ອທັງຫລາຍ
ແລະເຮັດຜ້າປົກຫົວໃຫ້ຄົນທຸກຂະໜາດ ເພື່ອລ່າວິນຍານ ເຈົ້າຈະລ່າວິນຍານຊຶ່ງເປັນຂອງປະ-
ຊາຊົນຂອງເຮົາ ແລະຈະຮັກສາວິນຍານອື່ນໆ ໃຫ້ຄົງຊີວິດຢູ່ ເພື່ອຜົນກຳໄລຂອງເຈົ້າບໍ [19]ເຈົ້າ
ຈະເຮັດໃຫ້ເຮົາສະທ້ານໃນທ່າມກາງປະຊາຊົນຂອງເຮົາ ດ້ວຍເຫັນແກ່ເຂົ້າເປືອກເປັນກຳໆ

ແລະຊີ້ນ ເຂົ້າຈີ່ເທົ່ານັ້ນ ຄົນທີ່ບໍ່ຄວນຈະຕາຍ ເຈົ້າກໍເຮັດໃຫ້ຕາຍເສຍ ຄົນທີ່ບໍ່ຄວນໄວ້ຊີວິດ
ເຈົ້າກໍໄວ້ຊີວິດ ໂດຍໄດ້ຂີ້ຕົວະຕໍ່ປະຊາຊົນທີ່ຟັງຄຳຂີ້ຕົວະ

[20]ດ້ວຍເຫດນີ້ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ ເບິ່ງແມ ເຮົາຕໍ່ສູ້ຜ້າຍັນຂອງເຈົ້າ
ຊຶ່ງເຈົ້າໃຊ້ລ່າວິນຍານເພື່ອໃຫ້ພວກເຂົາບິນໄປ ເຮົາຈະຈີກຜ້າຍັນນັ້ນເສຍຈາກແຂນຂອງເຈົ້າ
ທັງຫລາຍ ແລະເຮົາຈະປ່ອຍວິນຍານເຫລົ່ານັ້ນໄປ ຄືວິນຍານທີ່ເຈົ້າລ່າເພື່ອໃຫ້ພວກເຂົາບິນໄປ
[21]ຜ້າປົກຂອງເຈົ້າເຮົາກໍຈະຈີກເສຍ ແລະຊ່ວຍປະຊາຊົນຂອງເຮົາໃຫ້ພົ້ນຈາກມືຂອງເຈົ້າ ແລະ
ພວກເຂົາຈະບໍ່ເປັນເຫຍື່ອໃນມືຂອງເຈົ້າຕໍ່ໄປ ແລະເຈົ້າຈະຮູ້ວ່າເຮົາແມ່ນພຣະຜູ້ເປັນເຈົ້າ
[22]ເພາະເຈົ້າໄດ້ເຮັດໃຫ້ຄົນຊອບທຳທໍ້ໃຈດ້ວຍການຂີ້ຕົວະ ທັງທີ່ເຮົາບໍ່ໄດ້ເຮັດໃຫ້ພວກເຂົາເສົ້າ
ໃຈເລີຍ ແລະເຈົ້າໄດ້ເຮັດໃຫ້ມືຂອງຄົນຊົ່ວແຂງແຮງຂຶ້ນ ເພື່ອບໍ່ໃຫ້ພວກເຂົາຫັນຫລັງກັບຈາກ
ທາງຊົ່ວຂອງຕົນ ໂດຍສັນຍາວ່າພວກເຂົາຈະໄດ້ຊີວິດລອດພົ້ນ [23]ເພາະສະນັ້ນ ເຈົ້າຈະບໍ່ໄດ້
ເຫັນນິມິດບໍ່ຈິງ ຫລືເຮັດການທຳນວຍອີກ ດ້ວຍວ່າເຮົາຈະຊ່ວຍປະຊາຊົນຂອງເຮົາໃຫ້ພົ້ນຈາກມື
ຂອງເຈົ້າ ແລ້ວເຈົ້າຈະຮູ້ວ່າເຮົາແມ່ນພຣະຜູ້ເປັນເຈົ້າ"

# ບົດທີ 14

## ພຣະເຈົ້າໄດ້ຕັກເຕືອນພວກຜູ້ໃຫຍ່ຂອງອິສຣາເອນ

[1]ພວກຜູ້ໃຫຍ່ຂອງອິສຣາເອນບາງຄົນມາຫາຂ້າພະເຈົ້າ ແລະມານັ່ງຢູ່ຕໍ່ໜ້າຂ້າພະເຈົ້າ
[2]ແລະພຣະທຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າວ່າ [3]"ບຸດແຫ່ງມະນຸດເອີຍ ຄົນເຫລົ່ານີ້ໄດ້
ຍຶດເອົາຮູບເຄົາລົບຂອງພວກເຂົາໄວ້ໃນໃຈ ແລະວາງສິ່ງທີ່ສະດຸດໃຫ້ເຮັດຄວາມຊົ່ວຊ້າໄວ້ຕໍ່ໜ້າ
ພວກເຂົາ ຄວນທີ່ເຮົາຈະຍອມຕົວໃຫ້ພວກເຂົາຖາມເຮົາບໍ [4]ເພາະສະນັ້ນ ຈົ່ງເວົ້າກັບພວກເຂົາ
ແລະກ່າວແກ່ພວກເຂົາວ່າ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ ຄົນໃດໃນເຊື້ອສາຍອິ-
ສຣາເອນເອົາຮູບເຄົາລົບຂອງຕົນໄວ້ໃນໃຈ ແລະວາງສິ່ງທີ່ສະດຸດໃຫ້ເຮັດຄວາມຊົ່ວຊ້າໄວ້ຕໍ່ໜ້າ
ຕົນ ແລະຍັງມາຫາຜູ້ປະກາດພຣະທຳ ເຮົາແມ່ນພຣະຜູ້ເປັນເຈົ້າຈະຕອບລາວເອງດ້ວຍເລື່ອງ
ຮູບເຄົາລົບຫລວງຫລາຍຂອງລາວນັ້ນ [5]ເພື່ອເຮົາຈະໄດ້ຍຶດຈິດໃຈຂອງເຊື້ອສາຍອິສຣາເອນ ຜູ້
ຫ່າງໄກຈາກເຮົາທຸກຄົນດ້ວຍເລື່ອງຮູບເຄົາລົບຂອງພວກເຂົາ

[6]ເພາະສະນັ້ນ ຈົ່ງກ່າວແກ່ເຊື້ອສາຍອິສຣາເອນວ່າ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້
ວ່າ ຈົ່ງກັບໃຈ ແລະຫັນຫລັງກັບຈາກຮູບເຄົາລົບຂອງເຈົ້າເສຍ ແລະຈົ່ງຫັນໜ້າຂອງເຈົ້າຈາກ
ບັນດາສິ່ງໜ້າກຽດຊັງຂອງເຈົ້າ [7]ເພາະວ່າຄົນໃດໃນເຊື້ອສາຍອິສຣາເອນ ຫລືແຂກເມືອງຄົນ
ໃດທີ່ອາໄສຢູ່ໃນອິສຣາເອນ ຜູ້ຊຶ່ງແຍກຕົວຈາກເຮົາ ຍຶດເອົາຮູບເຄົາລົບຂອງຕົນໄວ້ໃນໃຈ
ແລະວາງສິ່ງທີ່ສະດຸດໃຫ້ເຮັດຄວາມຊົ່ວຊ້າໄວ້ຕໍ່ໜ້າຂອງຕົນ ແລ້ວຍັງຈະມາຫາຜູ້ປະກາດພຣະ-
ທຳ ເພື່ອຂໍຖາມລາວກ່ຽວກັບເຮົາ ເຮົາແມ່ນພຣະຜູ້ເປັນເຈົ້າຈະຕອບຄົນນັ້ນເອງ [8]ແລະເຮົາຈະ
ມຸ່ງໜ້າຂອງເຮົາຕໍ່ສູ້ຄົນນັ້ນ ເຮົາຈະເຮັດໃຫ້ລາວເປັນໝາຍສຳຄັນ ແລະເປັນສຸພາສິດ ແລະຈະ
ຕັດລາວອອກເສຍຈາກທ່າມກາງປະຊາຊົນຂອງເຮົາ ແລະເຈົ້າຈະຮູ້ວ່າເຮົາແມ່ນພຣະຜູ້ເປັນເຈົ້າ

[9]ແລະຖ້າຜູ້ປະກາດພຣະທຳຖືກຫລອກລວງໃຫ້ກ່າວຄຳໜຶ່ງຄຳໃດ ເຮົາແມ່ນພຣະຜູ້ເປັນເຈົ້າ

ໄດ້ລວງຜູ້ປະກາດພຣະທຳຄົນນັ້ນ ແລະເຮົາຈະຢຽດມືຂອງເຮົາອອກຕໍ່ສູ້ລາວ ແລະຈະທຳລາຍ
ລາວເສຍຈາກທ່າມກາງອິສຣາເອນ ປະຊາຊົນຂອງເຮົາ [10]ພວກເຂົາຈະຕ້ອງທົນຮັບໂທດເພາະ
ຄວາມຊົ່ວຊ້າຂອງຕົນ ໂທດຂອງຜູ້ປະກາດພຣະທຳ ແລະໂທດຂອງຜູ້ຂໍຖາມຈະຄືກັນ [11]ເພື່ອ
ວ່າເຊື້ອສາຍອິສຣາເອນຈະບໍ່ຫລົງເຮັດບາບໄປຈາກເຮົາອີກ ຫລືບໍ່ເຮັດຕົວໃຫ້ເປັນມົນທິນດ້ວຍ
ການລະເມີດທັງຫລາຍຂອງຕົນ ແຕ່ພວກເຂົາຈະເປັນປະຊາຊົນຂອງເຮົາ ແລະເຮົາຈະເປັນ
ພຣະເຈົ້າຂອງພວກເຂົາ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້”

## ເມືອງເຢຣູຊາເລັມຈະບໍ່ລອດພົ້ນ

[12]ແລະພຣະທຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າອີກວ່າ [13]“ບຸດແຫ່ງມະນຸດເອີຍ ເມື່ອ
ແຜ່ນດິນເຮັດບາບຕໍ່ເຮົາໂດຍປະພຶດລະເມີດຢ່າງໜ້າໜັກໃຈ ເຮົາກໍຈະຢຽດມືຂອງເຮົາອອກຕໍ່ສູ້
ແຜ່ນດິນນັ້ນ ຈະທຳລາຍອາຫານທີ່ເປັນຫລັກ ແລະຈະສົ່ງການອຶດຢາກອາຫານມາທີ່ແຜ່ນດິນ
ນັ້ນ ຈະຕັດມະນຸດ ແລະສັດອອກໄປຈາກແຜ່ນດິນນັ້ນ [14]ເຖິງແມ່ນວ່າມະນຸດທັງສາມນີ້ ຄື ໂນ-
ອາ ດານີເອນ ແລະໂຢບ ຢູ່ໃນແຜ່ນດິນນັ້ນ ພວກເຂົາກໍຈະເອົາແຕ່ຊີວິດຂອງຕົນໃຫ້ພົ້ນອອກ
ມາດ້ວຍຄວາມຊອບທຳຂອງເຂົາ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້

[15]ຖ້າເຮົາເຮັດໃຫ້ສັດຮ້າຍຜ່ານເຂົ້າແຜ່ນດິນນັ້ນ ແລະສັດເຫລົ່ານັ້ນເຮັດໃຫ້ຄົນໝົດໄປ ໃຫ້
ເປັນບ່ອນຮ້າງເປົ່າ ຈົນມະນຸດຜ່ານເຂົ້າໄປບໍ່ໄດ້ເພາະສັດຮ້າຍນັ້ນ [16]ອົງພຣະຜູ້ເປັນເຈົ້າພຣະ-
ເຈົ້າກ່າວວ່າ ເຮົາມີຊີວິດຢູ່ສັນໃດ ເຖິງວ່າບຸລຸດທັງສາມຢູ່ໃນແຜ່ນດິນນັ້ນ ພວກເຂົາຈະຊ່ວຍລູກ
ຊາຍຍິງໃຫ້ລອດພົ້ນບໍ່ໄດ້ ສະເພາະຕົວເຂົາເອງຈະລອດພົ້ນໄປໄດ້ ແຕ່ແຜ່ນດິນນັ້ນຈະຮ້າງເປົ່າ
ເສຍ

[17]ຫລືຖ້າເຮົານຳດາບມາຍັງແຜ່ນດິນນັ້ນ ແລະກ່າວວ່າ ‘ດາບເອີຍ ຈົ່ງຜ່ານຂ້າມແຜ່ນດິນນັ້ນ’
ເຮົາຈະຕັດມະນຸດແລະສັດອອກຈາກແຜ່ນດິນນັ້ນ [18]ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວວ່າ ເຖິງ
ແມ່ນບຸລຸດທັງສາມຈະຢູ່ໃນນັ້ນ ເຮົາມີຊີວິດຢູ່ສັນໃດ ພວກເຂົາກໍຈະຊ່ວຍລູກຊາຍຍິງໃຫ້ລອດ
ພົ້ນບໍ່ໄດ້ ສະເພາະຕົວພວກເຂົາເອງຈະລອດພົ້ນໄປໄດ້

[19]ຫລືຖ້າເຮົາສົ່ງພະຍາດລະບາດເຂົ້າມາໃນແຜ່ນດິນນັ້ນ ແລະລະບາຍຄວາມຄຽດຮ້າຍຂອງ
ເຮົາອອກເໜືອເມືອງນັ້ນດ້ວຍເລືອດ ເພື່ອຕັດມະນຸດ ແລະສັດອອກຈາກແຜ່ນດິນນັ້ນ [20]ເຖິງ
ແມ່ນວ່າ ໂນອາ ດານີເອນ ແລະໂຢບຢູ່ໃນແຜ່ນດິນນັ້ນ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວວ່າ
ເຮົາມີຊີວິດຢູ່ສັນໃດ ພວກເຂົາຈະຊ່ວຍລູກຊາຍຍິງໃຫ້ລອດພົ້ນບໍ່ໄດ້ ພວກເຂົາຈະຊ່ວຍສະເພາະ
ຊີວິດຂອງຕົນໃຫ້ລອດພົ້ນໄດ້ດ້ວຍຄວາມຊອບທຳຂອງເຂົາ

[21]ເພາະອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ ຈະຮ້າຍແຮງຫລາຍກວ່ານັ້ນຈັກເທົ່າໃດ
ເມື່ອເຮົາສົ່ງໄພແຫ່ງການພິພາກສາທັງສີ່ປະການຂອງເຮົາມາເໜືອເຢຣູຊາເລັມ ຄືດາບ ການ
ອຶດຢາກອາຫານ ສັດຮ້າຍ ແລະພະຍາດລະບາດ ເພື່ອຕັດມະນຸດ ແລະສັດອອກຈາກເມືອງນັ້ນ
[22]ເບິ່ງແມ ເຖິງຈະມີຄົນລອດຕາຍເຫລືອຢູ່ໃນເມືອງນັ້ນ ນຳເອົາລູກຊາຍ ແລະລູກສາວທັງ-
ຫລາຍຂອງຕົນອອກມາ ເມື່ອພວກເຂົາອອກມາຫາເຈົ້າ ເຈົ້າຈະໄດ້ເຫັນທາງ ແລະການກະທຳ
ຂອງເຂົາ ເຈົ້າຈະເບົາໃຈໃນເລື່ອງການຮ້າຍ ຊຶ່ງເຮົາໄດ້ນຳມາເໜືອເຢຣູຊາເລັມ ຄືບັນດາສິ່ງທີ່

ເຮົາໄດ້ນຳມາເໜືອເມືອງນັ້ນ [23]ຄົນເຫລົ່ານັ້ນຈະເຮັດໃຫ້ເຈົ້າເບົາໃຈ ເມື່ອເຈົ້າໄດ້ເຫັນທາງ ແລະ
ການກະທຳທັງຫລາຍຂອງເຂົາແລ້ວ ແລະເຈົ້າຈະຮູ້ວ່າ ເຮົາບໍ່ໄດ້ເຮັດສິ່ງທີ່ເຮົາໄດ້ເຮັດໄວ້ແລ້ວ
ໃນເມືອງນັ້ນດ້ວຍປາດສະຈາກເຫດຜົນ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ແຫລະ"

# ບົດທີ 15

## ເຢຣູຊາເລັມຖືກທຳລາຍເໝືອນຢ່າງເຄືອຕົ້ນອະງຸ່ນທີ່ຖືກໄຟເຜົາເສຍ

[1]ພຣະທຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າວ່າ [2]"ບຸດແຫ່ງມະນຸດເອີຍ ເຄືອຕົ້ນອະງຸ່ນ
ວິເສດກວ່າໄມ້ຢ່າງອື່ນ ແລະວິເສດກວ່າງ່າໄມ້ອື່ນຊຶ່ງຢູ່ໃນປ່າ [3]ພວກເຂົາເອົາເຄືອຕົ້ນອະງຸ່ນໄປ
ເຮັດຫຍັງແດ່ ຫລືຄົນເອົາໄປເຮັດຂໍສຳລັບແຂວນພາຊະນະອັນໃດແດ່ບໍ [4]ເບິ່ງແມ ພວກເຂົາໃຊ້
ເປັນຟືນໃສ່ໄຟ ເມື່ອໄຟໄໝ້ປາຍທັງສອງແລ້ວ ກາງກໍເປັນຖ່ານ ຈະໃຊ້ປະໂຫຍດຫຍັງໄດ້ບໍ
[5]ເບິ່ງແມ ເມື່ອມັນຍັງດີຢູ່ກໍບໍ່ໄດ້ໃຊ້ປະໂຫຍດຫຍັງ ເມື່ອຖືກໄຟໄໝ້ເປັນຖ່ານແລ້ວຍິ່ງມີປະ-
ໂຫຍດໜ້ອຍລົງ ຈະໃຊ້ເຮັດຫຍັງໄດ້

[6]ເພາະສະນັ້ນ ອົງພຣະຜູ້ເປັນເຈົ້າພຣະເຈົ້າຈຶ່ງກ່າວດັ່ງນີ້ວ່າ ເຄືອຕົ້ນອະງຸ່ນຊຶ່ງຢູ່ທ່າມກາງ
ປ່າໄມ້ ເຮົາຖິ້ມໃຫ້ມັນເປັນຟືນໃສ່ໄຟສັນໃດ ເຮົາຈະຖິ້ມຊາວເຢຣູຊາເລັມສັນນັ້ນ [7]ເຮົາຈະມຸ່ງ
ໜ້າຂອງເຮົາຕໍ່ສູ້ພວກເຂົາ ເຖິງແມ່ນວ່າເຂົາຈະໜີອອກຈາກໄຟອັນໜຶ່ງ ໄຟອີກອັນໜຶ່ງກໍຍັງຈະ
ເຜົາຜານພວກເຂົາ ແລະເມື່ອເຮົາມຸ່ງໜ້າຂອງເຮົາຕໍ່ສູ້ພວກເຂົາ ເຈົ້າຈະຮູ້ວ່າ ເຮົາແມ່ນພຣະຜູ້-
ເປັນເຈົ້າ [8]ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວວ່າ ເຮົາຈະເຮັດໃຫ້ແຜ່ນດິນນັ້ນຮ້າງເປົ່າ ເພາະ
ພວກເຂົາໄດ້ເຮັດບາບ"

# ບົດທີ 16

## ເຢຣູຊາເລັມເປັນເໝືອນດັ່ງຍິງທີ່ບໍ່ສັດຊື່

[1]ພຣະທຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າອີກວ່າ [2]"ບຸດແຫ່ງມະນຸດເອີຍ ຈົ່ງໃຫ້ເຢຣູ-
ຊາເລັມຮູ້ເຖິງຄວາມໜ້າກຽດຊັງຂອງຕົນ [3]ແລະກ່າວວ່າ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວ
ຢ່າງນີ້ແກ່ເຢຣູຊາເລັມວ່າ ຕົ້ນເດີມ ແລະກຳເນີດຂອງເຈົ້າເປັນແຜ່ນດິນຂອງຄົນການາອານ ພໍ່
ຂອງເຈົ້າເປັນຄົນອະໂມຣິດ ແລະແມ່ຂອງເຈົ້າເປັນຄົນຮິດຕີ [4]ເວົ້າເຖິງກຳເນີດຂອງເຈົ້າ ໃນມື້ທີ່
ເຈົ້າເກີດມານັ້ນ ພວກເຂົາບໍ່ໄດ້ຕັດສາຍແຫ່ ແລະບໍ່ໄດ້ໃຊ້ນ້ຳລ້າງຊຳລະເຈົ້າ ບໍ່ໄດ້ເອົາເກືອຖູ ບໍ່
ໄດ້ເອົາຜ້າພັນເຈົ້າໄວ້ [5]ບໍ່ມີຕາຈັກໜ່ວຍໜຶ່ງສົງສານເຈົ້າ ທີ່ຈະເມດຕາເຈົ້າ ແລະເຮັດສິ່ງເຫລົ່ານີ້
ໃຫ້ເຈົ້າ ເຈົ້າຖືກປະຖິ້ມໃນພື້ນທົ່ງ ເພາະໃນມື້ທີ່ເຈົ້າເກີດນັ້ນເຈົ້າເປັນທີ່ໜ້າກຽດຊັງ

[6]ເມື່ອເຮົາໄດ້ກາຍໄປໃກ້ເຈົ້າ ແລະໄດ້ເຫັນເຈົ້ານອນດີ້ນຢູ່ໃນກອງເລືອດຂອງເຈົ້າ ເຮົາກໍເວົ້າ
ກັບເຈົ້າໃນກອງເລືອດຂອງເຈົ້າວ່າ 'ຈົ່ງມີຊີວິດຢູ່' ເອີ ເຮົາກໍເວົ້າກັບເຈົ້າໃນກອງເລືອດຂອງເຈົ້າ
ວ່າ 'ຈົ່ງມີຊີວິດຢູ່' [7]ເຮົາໄດ້ເຮັດໃຫ້ເຈົ້າທະວີຄູນເໝືອນຢ່າງພືດໃນທົ່ງນາ ເຈົ້າກໍເຕີບໃຫຍ່ ແລະ
ສູງຂຶ້ນຈົນເປັນສາວເຕັມຕົວ ໜ້າເອິກຂອງເຈົ້າກໍມີຮູບຊົງງາມດີ ແລະຜົມຂອງເຈົ້າກໍປົ່ງງາມ
ແຕ່ເຈົ້າເຄີຍເປືອຍກາຍ ແລະບໍ່ມີຜ້າຫົ່ມ

8ເມື່ອເຮົາຜ່ານເຈົ້າໄປອີກເທື່ອໜຶ່ງ ແລະເບິ່ງເຈົ້າ ເບິ່ງແມ ເຈົ້າມີອາຍຸເຕັມສາວ ຮູ້ຈັກຮັກ
ແລ້ວ ເຮົາກໍຂະຫຍາຍເສື້ອຄຸມເຈົ້າ ແລະປົກຄຸມຄວາມເປືອຍກາຍຂອງເຈົ້າໄວ້ ອົງພຣະຜູ້ເປັນ-
ເຈົ້າພຣະເຈົ້າກ່າວວ່າ ເຮົາໄດ້ປະຕິຍານ ແລະເຮັດຄຳໝັ້ນສັນຍາກັບເຈົ້າ ແລະເຈົ້າກໍເປັນຂອງ
ເຮົາ

9ເຮົາເອົາເຈົ້າອາບນໍ້າ ລ້າງເລືອດອອກຈາກເຈົ້າ ແລະເຈີມເຈົ້າດ້ວຍນໍ້າມັນ 10ເຮົາແຕ່ງຕົວ
ເຈົ້າດ້ວຍເສື້ອຖັກແສ່ວ ແລະເອົາເກີບໜັງສຸບໃສ່ຕີນໃຫ້ເຈົ້າ ເຮົາພັນເຈົ້າໄວ້ດ້ວຍຜ້າປ່ານເນື້ອ
ລະອຽດ ແລະຄຸມເຈົ້າໄວ້ດ້ວຍຜ້າ 11ເຮົາແຕ່ງຕົວເຈົ້າດ້ວຍເຄື່ອງເອ້ ສຸບປອກແຂນໃຫ້ເຈົ້າ
ແລະໃສ່ສາຍຄໍໃຫ້ເຈົ້າ 12ເຮົາເອົາເພັດພອຍໃສ່ໜ້າຜາກເຈົ້າ ແລະໃສ່ຕຸ້ມຫູທີ່ຫູຂອງເຈົ້າ ແລະ
ສຸບມົງກຸດງາມໄວ້ເທິງຫົວຂອງເຈົ້າ 13ເຮົາປະດັບເຈົ້າດ້ວຍຄຳ ແລະເງິນ ເສື້ອຜ້າຂອງເຈົ້າກໍ
ເປັນຜ້າປ່ານເນື້ອລະອຽດ ຜ້າ ແລະຜ້າຖັກແສ່ວ ເຈົ້າກິນຍອດແປ້ງ ນໍ້າເຜິ້ງ ແລະນໍ້າມັນ ເຈົ້າ
ງາມເລີດ ແລະເຈົ້າຈະເລີນຂຶ້ນເປັນລາຊິນີ 14ຊື່ສຽງຂອງເຈົ້າກໍຊ່າລືໄປໃນທ່າມກາງປະຊາຊາດ
ເພາະຄວາມງາມຂອງເຈົ້າ ດ້ວຍຄວາມງາມນັ້ນກໍສົມບູນ ເນື່ອງຈາກຄວາມງົດງາມທີ່ເຮົາໄດ້
ຫຸ້ມເຫໃຫ້ເຈົ້າ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ແຫລະ

15ແຕ່ເຈົ້າວາງໃຈໃນຄວາມງາມຂອງເຈົ້າ ແລະໄດ້ຫລິ້ນຊູ້ເພາະຊື່ສຽງຂອງເຈົ້າ ບໍ່ວ່າຜູ້ໃດຈະ
ຜ່ານມາ ເຈົ້າກໍເຮັດໃຫ້ຫລົງໄປດ້ວຍການຫລິ້ນຊູ້ຂອງເຈົ້າ 16ເຈົ້າເອົາເສື້ອຜ້າຂອງເຈົ້າ ແລະ
ເຈົ້າໄດ້ສ້າງບັນດາສະຖານທີ່ນະມັດສະການ ປະດັບຢ່າງດີ ແລ້ວກໍຫລິ້ນຊູ້ຢູ່ເທິງບ່ອນນັ້ນ ບໍ່
ເຄີຍມີເໝືອນຢ່າງນີ້ມາກ່ອນ ຕໍ່ໄປກໍຈະບໍ່ມີອີກຈັກເທື່ອ 17ເຈົ້າຍັງເອົາເຄື່ອງປະດັບປະດາອັນ
ງາມຂອງເຈົ້າ ຊຶ່ງເປັນຄຳຂອງເຮົາ ແລະເງິນຂອງເຮົາທີ່ເຮົາໄດ້ໃຫ້ແກ່ເຈົ້າ ແລ້ວເຈົ້າສ້າງເປັນ
ຮູບຜູ້ຊາຍສຳລັບເຈົ້າ ເຈົ້າກໍຫລິ້ນຊູ້ຢູ່ກັບຮູບເຫລົ່ານັ້ນ 18ເຈົ້າເອົາເຄື່ອງແຕ່ງຕົວທີ່ຖັກແສ່ວໄປ
ຫົ່ມຮູບເຫລົ່ານັ້ນໄວ້ ວາງນໍ້າມັນ ແລະເຄື່ອງຫອມຂອງເຮົາໄວ້ຕໍ່ໜ້າມັນ 19ອາຫານທີ່ເຮົາໃຫ້ແກ່
ເຈົ້າກໍຄືກັນ ຄືເຮົາລ້ຽງເຈົ້າດ້ວຍຍອດແປ້ງ ນໍ້າມັນ ແລະນໍ້າເຜິ້ງ ເຈົ້າກໍເອົາມາວາງຕໍ່ໜ້າມັນ
ໃຫ້ເປັນກິ່ນຫອມທີ່ພໍໃຈ ແລະກໍເປັນຢ່າງນັ້ນ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ແຫລະ

20ຫລາຍກວ່ານັ້ນອີກ ເຈົ້າໄດ້ນຳລູກຊາຍຂອງເຈົ້າ ແລະລູກສາວຂອງເຈົ້າ ຊຶ່ງເຈົ້າໄດ້ໃຫ້
ບັງເກີດມາເພື່ອເຮົາ ເຈົ້າໄດ້ຖວາຍບູຊາແກ່ມັນເພື່ອໃຫ້ມັນເຜົາຜານ ການຫລິ້ນຊູ້ຂອງເຈົ້າຍັງ
ເປັນສິ່ງເລັກນ້ອຍຢູ່ບໍ 21ເຈົ້າຈຶ່ງໄດ້ຂ້າລູກຂອງເຮົາຖວາຍແກ່ຮູບເຫລົ່ານັ້ນໂດຍໃຫ້ລຸຍໄຟ
22ຕະຫລອດຄວາມໜ້າກຽດຊັງຂອງເຈົ້າ ແລະການຫລິ້ນຊູ້ຂອງເຈົ້າ ເຈົ້າບໍ່ໄດ້ຈົດຈຳວັນເວລາທີ່
ເຈົ້າຍັງນ້ອຍຢູ່ ເມື່ອເຈົ້າເປືອຍກາຍ ແລະບໍ່ມີເຄື່ອງນຸ່ງຫົ່ມ ນອນດີ້ນຢູ່ໃນກອງເລືອດຂອງເຈົ້າ

23ຕໍ່ມາພາຍຫລັງ ຈາກຄວາມຊົ່ວຮ້າຍທັງໝົດຂອງເຈົ້າ (ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວ
ວ່າ ວິບັດ ວິບັດແກ່ເຈົ້າ) 24ເຈົ້າໄດ້ສ້າງຫ້ອງຫລັງຄາໂຄ້ງສຳລັບຕົນ ຖະໜົນທຸກສາຍເຈົ້າກໍ
ສ້າງສະຖານທີ່ສູງນະມັດສະການສຳລັບຕົນ 25ຫົວຖະໜົນທຸກແຫ່ງເຈົ້າສ້າງສະຖານທີ່ສູງນະ-
ມັດສະການຂອງເຈົ້າ ແລະເອົາຄວາມງາມຂອງເຈົ້າມາເຮັດສິ່ງທີ່ໜ້າກຽດຊັງ ເຈົ້າໄດ້ມອບຕົວ
ຂອງເຈົ້າໃຫ້ຜູ້ທີ່ຜ່ານໄປມາບໍ່ວ່າໃຜ ແລະທະວີການຫລິ້ນຊູ້ຂອງເຈົ້າ 26ເຈົ້າໄດ້ຫລິ້ນຊູ້ກັບຄົນ
ເອຢິບ ຊຶ່ງເປັນເພື່ອນບ້ານທີ່ຮັກຫລາຍຂອງເຈົ້າ ທະວີການຫລິ້ນຊູ້ຂອງເຈົ້າເພື່ອເຮັດໃຫ້ເຮົາ

ຄຽດຮ້າຍ 27ເບິ່ງແມ ເຮົາຈຶ່ງຢຽດມືຂອງເຮົາອອກຕໍ່ສູ້ເຈົ້າ ແລະຫລຸດອາຫານສ່ວນແບ່ງຂອງ
ເຈົ້າລົງ ແລະມອບເຈົ້າໄວ້ໃຫ້ແກ່ພວກທີ່ກຽດຊັງເຈົ້າ ໃຫ້ເຂົາເຮັດຕາມໃຈມັກ ຄືບັນດາລູກສາວ
ຄົນຟີລິດສະຕິນ ຜູ້ຊຶ່ງອັບອາຍໃນການປະພຶດອັນໜ້າອັບອາຍຂອງເຈົ້າ 28ເຈົ້າຍັງຫລິ້ນຊູ້ກັບ
ຄົນອັດຊີເຣຍດ້ວຍ ເພາະວ່າເຈົ້າບໍ່ຮູ້ຈັກອີ່ມ ເຈົ້າຫລິ້ນຊູ້ກັບພວກເຂົາທັງຫລາຍ ເຖິງປານນັ້ນ
ເຈົ້າກໍຍັງບໍ່ອີ່ມໃຈ 29ເຈົ້າຍັງທະວີການຫລິ້ນຊູ້ຂອງເຈົ້າໃນແຜ່ນດິນການາອານກັບຄົນບາບີໂລນ
ເຖິງແມ່ນກັບແຜ່ນດິນນີ້ເຈົ້າກໍຍັງບໍ່ອີ່ມໃຈ

30ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວວ່າ ໃຈຂອງເຈົ້າເປັນພະຍາດຮັກແທ້ໆ ໃນເມື່ອເຈົ້າເຮັດ
ສິ່ງເຫລົ່ານີ້ ຊຶ່ງເປັນການກະທຳຂອງຍິງບໍ່ສັດຊື່ ທີ່ບໍ່ຮູ້ອາຍ 31ຄືສ້າງຫ້ອງຫລັງຄາໂຄ້ງໄວ້ທີ່ຫົວ
ຖະໜົນທຸກແຫ່ງ ແລະສ້າງສະຖານທີ່ສູງຂອງເຈົ້າໄວ້ຕາມຖະໜົນທຸກສາຍ ເຖິງປານນັ້ນ ເຈົ້າກໍ
ຍັງບໍ່ເໝືອນຍິງບໍ່ສັດຊື່ ເພາະເຈົ້າປະໝາດຄ່າຈ້າງ

32ເປັນເມຍທີ່ຫລິ້ນຊູ້ ເຈົ້າຍອມຕ້ອນຮັບແຂກແປກໜ້າແທນທີ່ຈະຮັບຕ້ອນຜົວ 33ຜູ້ຊາຍຍອມ
ໃຫ້ຂອງແກ່ຜູ້ຍິງບໍ່ສັດຊື່ທຸກຄົນ ແຕ່ເຈົ້າກັບໃຫ້ສິ່ງຂອງແກ່ຄົນຮັກທັງຫລາຍຂອງເຈົ້າ ໃຫ້ສິນ
ບົນ –ໂດຍໃຫ້ພວກເຂົາເຂົ້າມາຈາກທຸກດ້ານເພື່ອການຫລິ້ນຊູ້ຂອງເຈົ້າ 34ສະນັ້ນ ເຈົ້າຈຶ່ງຜິດ
ກັບຜູ້ຍິງອື່ນໃນເລື່ອງການຫລິ້ນຊູ້ຂອງເຈົ້າ ບໍ່ມີໃຜມາອ້ອນວອນໃຫ້ຫລິ້ນຊູ້ ແຕ່ເຈົ້າກັບໃຫ້ຄ່າ
ຈ້າງ ໃນຂະນະທີ່ບໍ່ມີຜູ້ໃດໃຫ້ຄ່າຈ້າງແກ່ເຈົ້າ ເພາະສະນັ້ນ ເຈົ້າຈຶ່ງແຕກຕ່າງກັນ

35ຍິງແມ່ຈ້າງເອີຍ ຈົ່ງຟັງພຣະທຳຂອງພຣະຜູ້ເປັນເຈົ້າ 36ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວ
ດັ່ງນີ້ວ່າ ເພາະຄວາມໜ້າກຽດຊັງຂອງເຈົ້າກໍຖອກອອກ ແລະ ຄວາມເປືອຍກາຍຂອງເຈົ້າກໍເຜີຍ
ອອກໃນການຫລິ້ນຊູ້ຂອງເຈົ້າກັບຄົນຮັກຂອງເຈົ້າ ແລະເພາະຮູບເຄົາລົບອັນໜ້າກຽດຊັງຂອງ
ເຈົ້າທັງໝົດ ແລະເພາະເລືອດລູກຂອງເຈົ້າທີ່ເຈົ້າຖວາຍໃຫ້ແກ່ມັນ 37ເບິ່ງແມ ເຮົາຈະຮວບຮວມ
ຄົນຮັກຂອງເຈົ້າທັງໝົດ ຊຶ່ງເປັນຜູ້ທີ່ເຈົ້າເພີດເພີນດ້ວຍທຸກຄົນທີ່ເຈົ້າຮັກ ແລະທຸກຄົນທີ່ເຈົ້າກຽດ
ຊັງ ເຮົາຈະຮວບຮວມພວກເຂົາໃຫ້ມາຕໍ່ສູ້ເຈົ້າຈາກທຸກດ້ານ ແລະຈະເຜີຍຄວາມເປືອຍກາຍຂອງ
ເຈົ້າຕໍ່ໜ້າພວກເຂົາ ເພື່ອພວກເຂົາຈະໄດ້ເຫັນການເປືອຍກາຍທັງໝົດຂອງເຈົ້າ 38ເຮົາຈະພິ-
ພາກສາເຈົ້າດັ່ງທີ່ພວກເຂົາພິພາກສາຜູ້ຍິງທີ່ລ່ວງປະເວນີ ແລະເຮັດໃຫ້ຄົນເລືອດຕົກ ເຮົາຈະນຳ
ເລືອດແຫ່ງຄວາມຄຽດຮ້າຍ ແລະຄວາມອິດສາມາເໜືອເຈົ້າ 39ແລະຈະມອບເຈົ້າໄວ້ໃນມືຊູ້ຂອງ
ເຈົ້າ ພວກເຂົາຈະທຳລາຍຫ້ອງຫລັງຄາໂຄ້ງຂອງເຈົ້າລົງ ແລະຈະທຳລາຍສະຖານທີ່ສູງຂອງ
ເຈົ້າ ພວກເຂົາຈະປົດເອົາເສື້ອຜ້າຂອງເຈົ້າແລະຈະເອົາເຄື່ອງປະດັບອັນງາມຂອງເຈົ້າໄປເສຍ
ປ່ອຍໃຫ້ເຈົ້າເປືອຍກາຍ ແລະບໍ່ມີເຄື່ອງນຸ່ງຫົ່ມ 40ພວກເຂົາຈະນຳຝູງຄົນມາຕໍ່ສູ້ເຈົ້າ ແລະຈະ
ແກວ່ງເຈົ້າດ້ວຍກ້ອນຫີນ ແລະຟັນເຈົ້າດ້ວຍດາບຂອງເຂົາ 41ພວກເຂົາຈະເອົາໄຟເຜົາບ້ານ
ເຮືອນຂອງເຈົ້າ ແລະເຮັດການພິພາກສາລົງໂທດເຈົ້າຕໍ່ໜ້າຂອງຜູ້ຍິງເປັນຈຳນວນຫລາຍ ເຮົາ
ຈະເຮັດໃຫ້ເຈົ້າຢຸດຫລິ້ນຊູ້ ແລະເຈົ້າຈະບໍ່ໃຫ້ຄ່າຈ້າງອີກຕໍ່ໄປ 42ເຮົາຈະລະບາຍຄວາມຄຽດຮ້າຍ
ຂອງເຮົາໃສ່ເຈົ້າໃຫ້ໝົດ ຄວາມອິດສາຈະໜີຈາກເຈົ້າໄປ ເຮົາຈະສະຫງົບ ແລະບໍ່ຄຽດຮ້າຍອີກ

43ເພາະວ່າເຈົ້າບໍ່ໄດ້ລະນຶກເຖິງມື້ທີ່ເຈົ້າຍັງນ້ອຍ ແຕ່ໄດ້ເຮັດໃຫ້ເຮົາຄຽດຮ້າຍ ສິ່ງເຫລົ່ານີ້
ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວວ່າ ເບິ່ງແມ ເຮົາຈະຕອບແທນຕາມທາງປະພຶດຂອງເຈົ້າເທິງ

ຫົວເຈົ້າ ເຈົ້າຈະບໍ່ໄດ້ປະພຶດຕົວດ້ວຍລາຄະຕັນຫາເພີ່ມເຂົ້າກັບຄວາມກຽດຊັງທັງໝົດຂອງເຈົ້າ
ດອກ

44ເບິ່ງແມ ທຸກຄົນທີ່ໃຊ້ສຸພາສິດຈະໃຊ້ສຸພາສິດຕໍ່ໄປນີ້ໃນເລື່ອງເຈົ້າ ຄື 'ແມ່ເປັນຢ່າງໃດ ລູກ
ສາວກໍເປັນຢ່າງນັ້ນ' 45ເຈົ້າເປັນລູກສາວຂອງແມ່ເຈົ້າ ຜູ້ກຽດຊັງຜົວ ແລະລູກຂອງຕົນ ເຈົ້າເປັນ
ສາວຄົນກາງຂອງເອື້ອຍ ແລະນ້ອງສາວຂອງເຈົ້າ ຜູ້ກຽດຊັງຜົວ ແລະລູກຂອງຕົນ ແມ່ຂອງ
ເຈົ້າເປັນຄົນຮິດຕີ ພໍ່ຂອງເຈົ້າເປັນຄົນອະໂມຣິດ 46ເອື້ອຍຂອງເຈົ້າຄືຊາມາເຣຍ ຜູ້ຢູ່ກັບລູກ
ສາວເໜືອເຈົ້າທາງດ້ານຊ້າຍ ແລະນ້ອງສາວຂອງເຈົ້າ ຜູ້ຢູ່ທາງດ້ານຂວາຂອງເຈົ້າ ຄືໂຊໂດມ
ກັບລູກສາວຂອງນາງ 47ເຖິງປານນັ້ນ ເຈົ້າກໍຍັງບໍ່ພໍໃຈທີ່ຈະດຳເນີນໃນທາງທັງຫລາຍຂອງພວກ
ເຂົາ ຫລືເຮັດຕາມສິ່ງທີ່ໜ້າກຽດຊັງຂອງພວກເຂົາ ແຕ່ເພາະວ່າມັນເປັນເລື່ອງເລັກນ້ອຍເກີນໄປ
ແລ້ວເຈົ້າກໍຊົ່ວກວ່າພວກເຂົາໃນບັນດາທາງທັງໝົດຂອງເຈົ້າ 48ອົງພຣະຜູ້ເປັນເຈົ້າພຣະເຈົ້າ
ກ່າວວ່າ ເຮົາມີຊີວິດຢູ່ສັນໃດ ໂຊໂດມນ້ອງສາວຂອງເຈົ້າກັບລູກສາວຂອງນາງ ກໍບໍ່ໄດ້ເຮັດ
ເໝືອນທີ່ເຈົ້າ ແລະລູກສາວຂອງເຈົ້າໄດ້ເຮັດ

49ເບິ່ງແມ ນີ້ແຫລະເປັນຄວາມຊົ່ວຊ້າຂອງໂຊໂດມນ້ອງສາວຂອງເຈົ້າຄືຕົວນາງ ແລະລູກ
ສາວຂອງນາງມີຄວາມຈອງຫອງ ມີອາຫານເຫລືອຮັບປະທານ ແລະມີຄວາມສະບາຍເກີນໄປ ບໍ່
ຊູກຳລັງມືຄົນຍາກຈົນ ແລະຄົນຂັດສົນ 50ພວກນາງຈອງຫອງ ແລະເຮັດສິ່ງໜ້າກຽດຊັງຕໍ່ໜ້າ
ເຮົາ ເພາະສະນັ້ນ ເມື່ອເຮົາເຫັນດີແລ້ວ ເຮົາຈຶ່ງກຳຈັດນາງເສຍ 51ຊາມາເຣຍບໍ່ໄດ້ເຮັດບາບ
ເຖິງເຄິ່ງຂອງເຈົ້າ ເຈົ້າເຮັດຄວາມໜ້າກຽດຊັງຫລາຍກວ່າພວກເຂົາທັງສອງ ແລະໂດຍຄວາມ
ກຽດຊັງທັງໝົດທີ່ເຈົ້າເຮັດນັ້ນ ຈຶ່ງເຮັດໃຫ້ເອື້ອຍແລະນ້ອງສາວຂອງເຈົ້າ ເບິ່ງເປັນເໝືອນຄົນ
ຊອບທຳ 52ເຈົ້າຈົ່ງທົນຮັບຄວາມອັບອາຍຂາຍໜ້າເພາະເຈົ້າໄດ້ເຮັດໃຫ້ການພິພາກສາເອນອຽງ
ໄປທາງເອື້ອຍ ແລະນ້ອງສາວຂອງເຈົ້າ ພວກນາງຖືກຫລາຍກວ່າເຈົ້າ ເພາະບາບທີ່ເຈົ້າໄດ້ເຮັດ
ນັ້ນ ກໍໜ້າກຽດຊັງຫລາຍກວ່າພວກນາງອີກ ເຈົ້າຈົ່ງອັບອາຍສາ ແລະຈົ່ງທົນຮັບຄວາມອັບອາຍ
ຂາຍໜ້າຂອງເຈົ້າ ເພາະເຈົ້າໄດ້ເຮັດໃຫ້ເອື້ອຍ ແລະນ້ອງສາວຂອງເຈົ້າເບິ່ງເປັນເໝືອນຄົນ
ຊອບທຳ

53ເມື່ອເຮົາຈະໃຫ້ພວກນາງກັບສູ່ສະພາບເດີມ ທັງສະພາບເດີມຂອງໂຊໂດມ ແລະລູກສາວ
ກັບສະພາບເດີມຂອງຊາມາເຣຍ ແລະລູກສາວ ເຮົາກໍຈະໃຫ້ເຈົ້າກັບສູ່ສະພາບເດີມຂອງເຈົ້າ
ທ່າມກາງເຂົາດ້ວຍ 54ເພື່ອເຈົ້າຈະທົນຮັບຄວາມອັບອາຍຂາຍໜ້າຂອງເຈົ້າ ແລະອັບອາຍສິ່ງທີ່
ເຈົ້າເຮັດແລ້ວທັງໝົດ ໃຫ້ເປັນການເລົ້າໂລມໃຈແກ່ເຂົາ 55ເມື່ອສ່ວນເອື້ອຍ ແລະນ້ອງສາວຂອງ
ເຈົ້າ ໂຊໂດມກັບລູກສາວຂອງນາງຈະໄດ້ກັບສູ່ສະພາບເດີມຂອງຕົນ ແລະຊາມາເຣຍ ກັບລູກ
ສາວຂອງນາງຈະກັບສູ່ສະພາບເດີມຂອງຕົນ ສ່ວນເຈົ້າ ແລະລູກສາວຂອງເຈົ້າຈະກັບໄປຍັງ
ສະພາບເດີມຂອງເຈົ້າ 56ໃນສະໄໝທີ່ເຈົ້າຈອງຫອງຢູ່ນັ້ນ ປາກຂອງເຈົ້າບໍ່ໄດ້ກ່າວເຖິງໂຊໂດມ
ນ້ອງສາວຂອງເຈົ້າບໍ່ແມ່ນບໍ 57ຄືກ່ອນຄວາມຊົ່ວຮ້າຍຂອງເຈົ້າຈະໄດ້ເຜີຍອອກ ຄືເວລາທີ່ເຈົ້າ
ເປັນສິ່ງທີ່ໜ້າຕຳໜິແກ່ລູກສາວຂອງຊີເຣຍ ແລະບັນດາຜູ້ທີ່ຢູ່ອ້ອມຮອບນາງ ຄືລູກສາວຂອງ
ຟີລິດສະຕິນຜູ້ທີ່ຢູ່ອ້ອມຮອບຊຶ່ງໝິ່ນປະໝາດເຈົ້າ 58ເຈົ້າຕ້ອງຮັບໂທດລາຄະຕັນຫາຂອງເຈົ້າ

ແລະຄວາມກຽດຊັງຂອງເຈົ້າ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ
59ເພາະອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ ເຮົາຈະເຮັດແກ່ເຈົ້າເໝືອນທີ່ເຈົ້າໄດ້ເຮັດ
ແລ້ວນັ້ນ ຜູ້ໝິ່ນປະໝາດຄຳປະຕິຍານ ແລະຫັກຄຳໝັ້ນສັນຍາ 60ເຖິງປານນັ້ນ ເຮົາຈະລະນຶກ
ເຖິງຄຳໝັ້ນສັນຍາຂອງເຮົາ ຊຶ່ງເຮົາເຮັດໄວ້ກັບເຈົ້າໃນສະໄໝທີ່ເຈົ້າຍັງສາວຢູ່ ແລະເຮົາຈະສະ-
ຖາປະນາຄຳໝັ້ນສັນຍານິລັນດອນໄວ້ກັບເຈົ້າ 61ແລ້ວເຈົ້າຈະລະນຶກເຖິງທາງທັງຫລາຍຂອງເຈົ້າ
ແລະມີຄວາມອັບອາຍ ເມື່ອເຈົ້າຮັບທັງເອື້ອຍ ແລະນ້ອງສາວຂອງເຈົ້າ ແລະເຮົາມອບໃຫ້ແກ່
ເຈົ້າເປັນລູກສາວ ແຕ່ບໍ່ແມ່ນຕາມຄຳໝັ້ນສັນຍາຊຶ່ງເຮັດໄວ້ກັບເຈົ້າ 62ເຮົາຈະສະຖາປະນາຄຳ-
ໝັ້ນສັນຍາຂອງເຮົາໄວ້ກັບເຈົ້າ ແລະເຈົ້າຈະຮູ້ວ່າເຮົາແມ່ນພຣະຜູ້ເປັນເຈົ້າ 63ເພື່ອເຈົ້າຈະຈື່ໄດ້
ແລະສົນໃຈ ເພາະຄວາມອັບອາຍຂອງເຈົ້າ ເຈົ້າຈະບໍ່ອ້າປາກເວົ້າອີກ ເມື່ອເຮົາລຶບລ້າງມົນທິນ
ບາບທຸກສິ່ງທີ່ເຈົ້າໄດ້ເຮັດມາແລ້ວ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້”

# ບົດທີ 17

## ຄຳອຸປະມາເລື່ອງນົກອິນຊີສອງໂຕ

1ພຣະທຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າວ່າ 2“ບຸດແຫ່ງມະນຸດເອີຍ ຈົ່ງຍົກຖ້ອຍຄຳ
ອັນເລິກລັບ ແລະກ່າວເປັນຄຳອຸປະມາແກ່ເຊື້ອສາຍອິສຣາເອນ 3ວ່າ ອົງພຣະຜູ້ເປັນເຈົ້າ
ພຣະເຈົ້າກ່າວດັ່ງນີ້ວ່າ ມີນົກອິນຊີໃຫຍ່ໂຕໜຶ່ງ ປີກໃຫຍ່ ແລະຂົນປີກກໍຍາວ ມີຂົນຫລາຍສີ
ມາຍັງເລບານອນ ແລະຈິກຍອດຕົ້ນແປກ 4ມັນຫັກຍອດກິ່ງອ່ອນແລ້ວກໍຄາບໄປຍັງແຜ່ນດິນທີ່
ມີການຄ້າຂາຍ ແລະວາງໄວ້ໃນຫົວເມືອງຂອງພໍ່ຄ້າທັງຫລາຍ 5ແລ້ວມັນກໍເອົາເມັດພືດແຫ່ງ
ແຜ່ນດິນໄປປູກໄວ້ໃນບ່ອນດິນອຸດົມສົມບູນ ມັນເອົາໄປໄວ້ຢູ່ແຄມແມ່ນໍ້າ ປູກໄວ້ຄືກັບກິ່ງຕົ້ນໄຄ້
ນໍ້າ 6ເບ້ຍກໍປົ່ງຂຶ້ນມາ ແລະເຕີບໃຫຍ່ຂຶ້ນເປັນເຄືອອະງຸ່ນເຕ້ຍ ແຜ່ຂະຫຍາຍໜໍ່ທັງຫລາຍ ກິ່ງ
ກ້ານຂອງຕົ້ນນີ້ກໍລາມໄປຫາໂຕນົກອິນຊີ ແລະຮາກກໍຍັງຄົງຢູ່ລຸ່ມມັນ ເມັດຈຶ່ງບັງເກີດເປັນເຄືອ
ແຕກກິ່ງງ່າສາຂາ ແລະອອກໃບ 7ແຕ່ມີນົກອິນຊີໂຕໃຫຍ່ອີກໂຕໜຶ່ງ ມີປີກໃຫຍ່ ແລະມີຂົນ
ຫລາຍ ເຄືອອະງຸ່ນເຄືອນັ້ນ ເຊື່ອງຮາກມາຫານົກອິນຊີໂຕນີ້ ແລະແຕກກິ່ງງ່າຊີ້ມາຫາມັນ ເພື່ອ
ໃຫ້ມັນຫົດນໍ້າໃຫ້ຈາກຮ່ອງທີ່ປູກຢູ່ນັ້ນ 8ນົກໄດ້ຍ້າຍມັນໄປປູກໄວ້ໃນບ່ອນດິນດີໃກ້ແມ່ນໍ້າ ເພື່ອ
ໃຫ້ແຕກກິ່ງງ່າ ແລະບັງເກີດຜົນ ແລະເປັນເຄືອອະງຸ່ນທີ່ມີກຽດ 9ຈົ່ງກ່າວວ່າ ອົງພຣະຜູ້ເປັນ-
ເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ ເຄືອນັ້ນຈະຈະເລີນຂຶ້ນໄດ້ບໍ ນົກນັ້ນຈະບໍ່ຖອນຮາກມັນຂຶ້ນ ແລະ
ເດັດຜົນເພື່ອໃຫ້ໃບອ່ອນຫ່ຽວແຫ້ງບໍ ນົກນັ້ນຈະເຮັດໃຫ້ໃບອ່ອນທີ່ປົ່ງຂຶ້ນໃໝ່ແລ້ວຫ່ຽວແຫ້ງໄປ
ໂດຍບໍ່ຕ້ອງມີອຳນາດຫລວງຫລາຍ ຫລືປະຊາຊົນເປັນຈຳນວນຫລາຍ ເພື່ອຖອນເຄືອອອກຈາກ
ຮາກ 10ເບິ່ງແມ ເມື່ອມັນຍ້າຍໄປປູກ ເຄືອນັ້ນກໍປົ່ງງາມດີບໍ ເມື່ອລົມທິດຕາເວັນອອກພັດຖືກມັນ
ມັນຈະບໍ່ຫ່ຽວແຫ້ງໄປບໍ ມັນຈະຫ່ຽວແຫ້ງໄປເຖິງຮ່ອງທີ່ມັນເກີດມານັ້ນບໍ່ແມ່ນບໍ”

## ການກະບົດຂອງເຊເດກີຢານຳການທຳລາຍມາສູ່ອິສຣາເອນ

11ພຣະທຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າອີກວ່າ 12“ບັດນີ້ ຈົ່ງກ່າວແກ່ເຊື້ອສາຍທີ່
ມັກກະບົດນັ້ນວ່າ ທ່ານທັງຫລາຍບໍ່ຮູ້ບໍວ່າ ສິ່ງເຫລົ່ານີ້ມີຄວາມໝາຍວ່າຢ່າງໃດ ຈົ່ງບອກພວກ

ເຂົາວ່າ ເບິ່ງແມ ກະສັດກຸງບາບີໂລນໄດ້ມາຍັງກຸງເຢຣູຊາເລັມ ກວາດເອົາກະສັດ ແລະເຈົ້າ
ນາຍທັງຫລາຍ ພາມາເຖິງກະສັດໃນເມືອງບາບີໂລນ [13]ພະອົງໄດ້ເອົາເຊື້ອພະວົງຜູ້ໜຶ່ງ ແລະ
ເຮັດຄຳໝັ້ນສັນຍາກັບເພິ່ນ ແລະໄດ້ໃຫ້ເຂົາປະຕິຍານຕົວ ຄົນສຳຄັນຂອງແຜ່ນດິນ ພະອົງກໍໄດ້
ກວາດຕ້ອນເອົາໄປ [14]ເພື່ອວ່າລາຊະອານາຈັກນັ້ນຈະຕ່ຳຕ້ອຍ ຍົກຕົວຂຶ້ນອີກບໍ່ໄດ້ ແລະການ
ຮັກສາຄຳໝັ້ນສັນຍາຂອງພະອົງຈະຍັ້ງຢືນຢູ່ໄດ້ [15]ແຕ່ກະສັດໄດ້ກະບົດຕໍ່ພະອົງ ໂດຍສົ່ງລາ-
ຊະທູດໄປຍັງເອຢິບດ້ວຍຫວັງວ່າຈະໄດ້ມ້າ ແລະກອງທັບໃຫຍ່ ກະສັດຈະເຮັດສຳເລັດບໍ ຜູ້ທີ່
ເຮັດເຊັ່ນນີ້ຈະໜີໄປລອດພົ້ນບໍ ຖ້າທ່ານລະເມີດຄຳໝັ້ນສັນຍາ ຍັງຈະລອດພົ້ນໄດ້ອີກບໍ

[16]ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວວ່າ ເຮົາມີຊີວິດຢູ່ສັນໃດ ເພິ່ນຈະຕ້ອງຕາຍໃນບາບີໂລນ
ໃນບ່ອນທີ່ກະສັດອົງນັ້ນປະທັບຢູ່ ຄືກະສັດຜູ້ໄດ້ຕັ້ງເພິ່ນໃຫ້ເປັນກະສັດ ແລະເພິ່ນໄດ້ໝິ່ນປະ-
ໝາດຄຳປະຕິຍານຕໍ່ພະອົງ ໂດຍໄດ້ລະເມີດຕໍ່ຄຳໝັ້ນສັນຍາທີ່ໄດ້ເຮັດໄວ້ກັບພະອົງ [17]ຟາຣາ-
ໂອປະກອບດ້ວຍກອງທັບອັນໃຫຍ່ ແລະຜູ້ຄົນຫລວງຫລາຍຈະບໍ່ຊ່ວຍເພິ່ນຜູ້ນັ້ນ ໃນການສົງ-
ຄາມ ພວກເຂົາກໍ່ສ້າງປ້ອມປ້ອງກັນ ແລະກໍ່ກຳແພງອ້ອມເພື່ອຈະທຳລາຍຄົນຢ່າງຫລວງຫລາຍ
ເສຍ [18]ເພາະເພິ່ນປະໝາດຄຳປະຕິຍານ ແລະລະເມີດຕໍ່ຄຳໝັ້ນສັນຍາ ເບິ່ງແມ ເພາະເພິ່ນປະ-
ຕິຍານຕົວ ແລະຍັງເຮັດສິ່ງທັງປວງເຫລົ່ານີ້ ເພິ່ນຈຶ່ງຈະໜີພົ້ນບໍ່ໄດ້

[19]ເພາະສະນັ້ນ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ ເຮົາມີຊີວິດຢູ່ສັນໃດ ເພາະຄຳ
ປະຕິຍານຕໍ່ເຮົາທີ່ເຂົາໝິ່ນປະໝາດ ແລະຄຳໝັ້ນສັນຍາຂອງເຮົາທີ່ເພິ່ນລະເມີດເສຍ ເຮົາຈະ
ຕອບແທນໃຫ້ຕົກເທິງຫົວຂອງເພິ່ນຜູ້ນັ້ນ [20]ເຮົາຈະກາງແຫຂອງເຮົາຄຸມລາວ ແລະລາວຈະຕິດ
ກັບຂອງເຮົາ ແລະເຮົາຈະນຳລາວເຂົ້າໄປໃນບາບີໂລນ ແລະພິພາກສາລາວຢູ່ບ່ອນນັ້ນ ໃນ
ເລື່ອງທີ່ລາວໄດ້ທໍລະຍົດຕໍ່ເຮົາ [21]ແລະບັນດາຜູ້ລີ້ໄພກັບກອງທັບທັງໝົດຂອງລາວຈະລົ້ມລົງ
ດ້ວຍດາບ ແລະຜູ້ທີ່ເຫລືອຢູ່ຈະກະຈາຍໄປຕາມລົມທຸກໆທິດ ແລະເຈົ້າຈະຮູ້ວ່າເຮົາແມ່ນພຣະ-
ຜູ້ເປັນເຈົ້າທີ່ໄດ້ລັ່ນຄຳເວົ້າໄວ້ແລ້ວ"

[22]ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ "ເຮົາເອງຈະເອົາຍອດສູງຂອງຕົ້ນແປກ ແລະ
ປູກໄວ້ ເຮົາຈະຫັກກິ່ງງ່າອ່ອນຂອງມັນອອກເສຍ ແລະເຮົາເອງຈະປູກມັນໄວ້ເທິງພູເຂົາສູງ
ແລະໃຫຍ່ [23]ເຮົາຈະປູກມັນໄວ້ເທິງພູເຂົາສູງຂອງອິສຣາເອນ ເພື່ອຈະແຕກກິ່ງງ່າ ແລະບັງເກີດ
ຜົນ ເປັນຕົ້ນແປກທີ່ມີກຽດ ແລະນົກທຸກຊະນິດຈະມາອາໄສຢູ່ກ້ອງມັນ ນົກທຸກຊະນິດຈະມາ
ເຮັດຮັງຢູ່ທີ່ຮົ່ມກິ່ງກ້ານຂອງມັນ [24]ແລະຕົ້ນໄມ້ທຸກຕົ້ນໃນທົ່ງຈະຮູ້ວ່າເຮົາແມ່ນພຣະຜູ້ເປັນເຈົ້າ
ເຮັດຕົ້ນໄມ້ສູງໃຫ້ຕ່ຳລົງ ແລະເຮັດ ຕົ້ນໄມ້ຕ່ຳໃຫ້ສູງຂຶ້ນ ເຮັດຕົ້ນໄມ້ຂຽວໃຫ້ຫ່ຽວແຫ້ງ ແລະ
ເຮັດຕົ້ນໄມ້ແຫ້ງໃຫ້ງາມສົດຊື່ນ ເຮົາແມ່ນພຣະຜູ້ເປັນເຈົ້າໄດ້ລັ່ນຄຳເວົ້າແລ້ວ ເຮົາໄດ້ເຮັດເຊັ່ນ
ນັ້ນ"

# ບົດທີ 18

## ການຮັບຜິດຊອບຂອງແຕ່ລະຄົນ

[1]ພຣະຜູ້ເປັນເຈົ້າຊົງກ່າວຕໍ່ຂ້າພະເຈົ້າວ່າ, [2]"ເປັນຫຍັງ ປະຊາຊົນຈຶ່ງເວົ້າຄຳສຸພາສິດນີ້ໃນ

ປະເທດອິສຣາເອນວ່າ ພໍ່ແມ່ກິນໝາກອະງຸ່ນດິບ ແຕ່ພວກລູກຊໍ້າພັດເຂັດແຂ້ວ.”
3ພຣະຜູ້ເປັນເຈົ້າຊົງກ່າວຕໍ່ໄປອີກວ່າ “ເຮົາເປັນພຣະເຈົ້າຜູ້ມີຊີວິດຢູ່ແນ່ນອນ ສະນັ້ນ ພວກ
ເຈົ້າບໍ່ຕ້ອງເວົ້າຄຳສຸພາສິດຂ້າງເທິງນີ້ໃນອິສຣາເອນອີກ. 4ຊີວິດພໍ່ ຊີວິດລູກ ແລະຊີວິດຂອງ
ທຸກໆ ຄົນເປັນຂອງເຮົາ ສະນັ້ນ ບຸກຄົນໃດເຮັດບາບບຸກຄົນນັ້ນກໍຕ້ອງຕາຍ.
5-6ສົມມຸດວ່າມີຄົນດີທີ່ສັດຊື່ ແລະຊອບທຳແທ້ຈັກຄົນໜຶ່ງ ຄົນນັ້ນບໍ່ຂາບໄຫວ້ຮູບເຄົາລົບຂອງ
ຊາວອິສຣາເອນ ຫລືບໍ່ກິນຂອງທີ່ເອົາບູຊາໃນສະຖານທີ່ທີ່ເຮົາຫ້າມ ບໍ່ລໍ້ລວງຫລິ້ນເມຍຂອງຄົນ
ອື່ນ ບໍ່ຮ່ວມເພດກັບຍິງທີ່ກຳລັງເປັນລະດູ. 7ບໍ່ສໍ້ໂກງ ຫລືບີບບີ້ຄົນໜຶ່ງຄົນໃດ ແຕ່ສົ່ງສິ່ງຂອງ
ຈຳນຳຄືນໃຫ້ແກ່ລູກໜີ້ ໃຫ້ອາຫານແກ່ຜູ້ທີ່ອຶດຢາກ ແລະໃຫ້ເສື້ອຜ້າແກ່ຜູ້ທີ່ບໍ່ມີ 8ບໍ່ໄດ້ໃຫ້ຄົນ
ຢືມເງິນເພື່ອເອົາດອກເບ້ຍ ປະຕິເສດບໍ່ຍອມເຮັດຄວາມຊົ່ວ ໃຫ້ຄວາມຍຸດຕິທຳແກ່ຜູ້ເປັນຄວາມ.
9ເຊື່ອຟັງຄຳສັ່ງ ແລະເຮັດຕາມພຣະທຳຂອງເຮົາດ້ວຍຄວາມເອົາໃຈໃສ່ ແລະຊື່ສັດສຸດຈະລິດ ຜູ້
ນັ້ນແຫລະຄືຄົນຊອບທຳ ລາວຈະມີຊີວິດຢູ່ ພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ແຫລະ.
10-11ອີກຢ່າງໜຶ່ງສົມມຸດວ່າ ຜູ້ນັ້ນມີລູກຊາຍຂີ້ລັກແລະຂ້າຄົນ ເປັນຜູ້ເຮັດສິ່ງທີ່ພໍ່ຂອງຕົນບໍ່
ເຄີຍເຮັດມາກ່ອນ ລາວກິນເຄື່ອງທີ່ເອົາມາບູຊາໃນສະຖານທີ່ທີ່ເຮົາຫ້າມ ລໍ້ລວງຫລິ້ນເມຍຂອງ
ຄົນອື່ນ 12ບັງຄັບສໍ້ໂກງຄົນຍາກຈົນ ໃຊ້ຄວາມຮຸນແຮງຍາດຊິງເຄື່ອງຂອງຄົນອື່ນ ບໍ່ຍອມຄືນ
ຂອງໃຫ້ແກ່ຜູ້ເອົາມາຈຳນຳ ຂາບໄຫວ້ຮູບເຄົາລົບ ເຮັດສິ່ງທີ່ໜ້າຂີ້ດຽດ. 13ໃຫ້ຄົນຢືມເງິນເພື່ອ
ເອົາດອກເບ້ຍ ແລ້ວຄົນຜູ້ນີ້ຄວນຈະມີຊີວິດຢູ່ບໍ? ລາວຈະມີຊີວິດຢູ່ບໍ່ໄດ້ ເພາະວ່າລາວໄດ້ເຮັດ
ໃນສິ່ງທີ່ໜ້າຂີ້ດຽດ ແລະລະອາຍເຫລົ່ານີ້ມາແລ້ວ ລາວຈະຕ້ອງຕາຍຍ້ອນການກະທຳນັ້ນ ແລະ
ຕ້ອງຮັບຜິດຊອບເອົາເອງໃນການຕາຍນັ້ນ.
14ບັດນີ້ ສົມມຸດວ່າຄົນຜູ້ນີ້ມີລູກຊາຍຢູ່ຜູ້ໜຶ່ງ ລູກຊາຍຜູ້ນີ້ໄດ້ເຫັນພໍ່ເຮັດບາບທຸກຢ່າງ ແຕ່ບໍ່
ໄດ້ເຮັດຕາມ. 15ບໍ່ໄດ້ຂາບໄຫວ້ຮູບເຄົາລົບແຫ່ງອິສຣາເອນ ບໍ່ກິນຂອງທີ່ເອົາບູຊາໃນສະຖານທີ່
ທີ່ເຮົາຫ້າມ ບໍ່ລໍ້ລວງຫລິ້ນເມຍຂອງຄົນອື່ນ 16ບໍ່ກົດຂີ່ຂົ່ມເຫັງ ຫລືໂລບເອົາຂອງຄົນໜຶ່ງຄົນໃດ
ລາວຄືນຂອງຈຳນຳໃຫ້ແກ່ລູກໜີ້ ໃຫ້ອາຫານແກ່ຜູ້ທີ່ຫິວແລະໃຫ້ເສື້ອຜ້າແກ່ຜູ້ທີ່ບໍ່ມີ. 17ບໍ່ຍອມ
ເຮັດຊົ່ວ ບໍ່ໄດ້ໃຫ້ຄົນຢືມເງິນເພື່ອເອົາດອກເບ້ຍເປັນຜູ້ປະພຶດຕາມພຣະທຳ ແລະຄຳສັ່ງຂອງເຮົາ
ສະນັ້ນລາວຈະບໍ່ຕາຍຍ້ອນບາບທີ່ພໍ່ໄດ້ເຮັດ ແຕ່ຈະມີຊີວິດຢູ່ຢ່າງແນ່ນອນ. 18ສ່ວນພໍ່ຂອງລາວ
ນັ້ນສໍ້ໂກງ ຂີ້ລັກ ແລະເຮັດຊົ່ວກັບທຸກຄົນສະເໝີ ດັ່ງນັ້ນ ລາວຈຶ່ງຕ້ອງຕາຍຍ້ອນບາບຂອງຕົນ.
19ແຕ່ເຈົ້າຖາມວ່າ ເປັນຫຍັງລູກຊາຍຈຶ່ງບໍ່ໄດ້ຮັບໂທດຍ້ອນບາບຂອງພໍ່? ຄຳຕອບກໍຄືລູກ
ຊາຍໄດ້ເຮັດດີ ແລະຊອບທຳ ໄດ້ຮັກສາພຣະທຳ ແລະໄດ້ປະພຶດຕາມດ້ວຍຄວາມເອົາໃຈໃສ່
ດັ່ງນັ້ນ ລາວຈຶ່ງຈະມີຊີວິດຢູ່ຢ່າງແນ່ນອນ. 20ຜູ້ໃດເຮັດບາບຜູ້ນັ້ນຈະຕ້ອງຕາຍ ບໍ່ແມ່ນວ່າລູກ
ຊາຍຕ້ອງໄດ້ຮັບໂທດຍ້ອນບາບຂອງພໍ່ ຫລືພໍ່ຕ້ອງຮັບໂທດຍ້ອນບາບຂອງລູກດອກ ຄົນດີກໍຈະ
ໄດ້ຮັບຜົນດີ ແລະຄົນຊົ່ວກໍຈະໄດ້ຮັບຜົນຊົ່ວ.
21ຖ້າຄົນຊົ່ວເຊົາເຮັດບາບ ແລະປະພຶດຕາມພຣະທຳຂອງເຮົາ ເຮັດແຕ່ສິ່ງທີ່ດີ ແລະຊອບທຳ
ລາວກໍຈະບໍ່ຕາຍ ແຕ່ຈະມີຊີວິດຢູ່ຢ່າງແນ່ນອນ. 22ເຮົາຈະໃຫ້ອະໄພບາບທັງປວງແກ່ລາວ ແລ້ວ
ລາວຈະມີຊີວິດຢູ່ເພາະວ່າໄດ້ເຮັດຢ່າງຊອບທຳ.” 23ພຣະຜູ້ເປັນເຈົ້າຊົງຖາມວ່າ, “ເຈົ້າຄິດວ່າ

ເຮົາດີໃຈທີ່ເຫັນຄົນຊົ່ວຕາຍຊັ້ນບໍ? ບໍ່ແມ່ນຢ່າງນັ້ນດອກ ເຮົາຈະດີໃຈແຕ່ເມື່ອເຫັນຄົນປ່ຽນໃຈ
ແລະມີຊີວິດຢູ່ເທົ່ານັ້ນ.

24ແຕ່ຖ້າຄົນຊອບທຳເຊົາເຮັດດີ ເລີ່ມຕົ້ນເຮັດຊົ່ວຕ່າງໆ ເຮັດສິ່ງທີ່ໜ້າຂີ້ດຽດເຊັ່ນດຽວກັນກັບ
ຄົນຊົ່ວ ຄົນຜູ້ນັ້ນຄວນຈະມີຊີວິດຢູ່ບໍ? ບໍ່ມີເລີຍ ຄວາມດີທີ່ລາວໄດ້ເຮັດມາຈະບໍ່ປະກົດ ລາວຈະ
ຕ້ອງຕາຍຍ້ອນຄວາມບໍ່ສັດຊື່ ແລະຍ້ອນບາບຂອງລາວເອງ.

25ແຕ່ເຈົ້າຊໍ້າພັດເວົ້າວ່າ ພຣະຜູ້ເປັນເຈົ້າຊົງເຮັດບໍ່ຍຸດຕິທຳ ໂອ ພວກອິສຣາເອນເອີຍ ຈົ່ງ
ຟັງເຮົາກ່ອນ ເຈົ້າຄິດວ່າ ວິທີການຂອງເຮົາບໍ່ຍຸດຕິທຳຊັ້ນບໍ? ວິທີການຂອງພວກເຈົ້ານັ້ນແຫລະ
ບໍ່ຍຸດຕິທຳ. 26ເມື່ອຄົນຊອບທຳເຊົາເຮັດດີ ແລະເລີ່ມຕົ້ນເຮັດຊົ່ວກໍຕ້ອງຕາຍໄປ ລາວຕາຍຍ້ອນ
ຄວາມຊົ່ວທີ່ລາວເຮັດ. 27ເມື່ອຄົນຊົ່ວປ່ຽນໃຈຈາກການເຮັດບາບ ມາເຮັດສິ່ງທີ່ດີ ແລະຊອບທຳ
ກໍເປັນການຊ່ອຍຊີວິດຂອງລາວເອງໄວ້. 28ເພາະວ່າລາວຄິດຮູ້ເມື່ອໃນໃຈເຖິງສິ່ງທີ່ໄດ້ເຮັດມາ
ແລ້ວປ່ຽນໃຈບໍ່ເຮັດອີກ ດັ່ງນັ້ນແຫລະ ລາວຈຶ່ງຈະບໍ່ຕາຍຢ່າງແນ່ນອນ ແຕ່ຈະມີຊີວິດຢູ່ຕໍ່ໄປ.
29ອິສຣາເອນ ພວກເຈົ້າເວົ້າວ່າ ພຣະຜູ້ເປັນເຈົ້າຊົງເຮັດບໍ່ຍຸດຕິທຳ ເຈົ້າຄິດວ່າວິທີການຂອງ
ເຈົ້າຍຸດຕິທຳຊັ້ນບໍ? ວິທີການຂອງເຈົ້ານັ້ນແຫລະບໍ່ຍຸດຕິທຳ.

30ອິສຣາເອນເອີຍ ບັດນີ້ ເຮົາ ພຣະຜູ້ເປັນເຈົ້າຈະບອກເຈົ້າວ່າ ເຮົາ ຈະພິພາກສາພວກເຈົ້າ
ແຕ່ລະຄົນຕາມການກະທຳຂອງໃຜລາວ ຈົ່ງຫລີກໜີຈາກຄວາມຊົ່ວຮ້າຍທັງປວງທີ່ເຈົ້າກຳລັງ
ເຮັດຢູ່ນັ້ນເສຍ ຢ່າໃຫ້ບາບທຳລາຍເຈົ້າ ຈົ່ງຫລີກຈາກການເຮັດຊົ່ວທັງປວງ. 31ໃຫ້ປ່ຽນຄວາມ
ຄິດ ແລະຈິດໃຈໃໝ່ເສຍ ໂອ ອິສຣາເອນເອີຍ ຫລືວ່າພວກເຈົ້າຢາກຕາຍຊັ້ນບໍ?" 32ພຣະຜູ້-
ເປັນເຈົ້າຊົງກ່າວຕໍ່ໄປວ່າ, "ເຮົາບໍ່ຢາກໃຫ້ຄົນໜຶ່ງຄົນໃດຕາຍ ສະນັ້ນ ຈົ່ງເຊົາເຮັດບາບ ແລະມີ
ຊີວິດຢູ່ສາ."

# ບົດທີ 19

## ບົດຄ່ຳຄວນເລື່ອງເຈົ້ານາຍອິສຣາເອນ

1ຝ່າຍເຈົ້າຈົ່ງເປັ່ງສຽງຮ້ອງບົດຄ່ຳຄວນເລື່ອງເຈົ້ານາຍອິສຣາເອນ 2ກ່າວວ່າ "ແມ່ຂອງເຈົ້າ
ເປັນຢ່າງໃດນໍ ກໍເປັນແມ່ໂຕສິງ ນາງນອນຢູ່ທ່າມກາງໂຕສິງແທ້ໆ ນາງລ້ຽງດູລູກຂອງນາງຢູ່
ທ່າມກາງໂຕສິງໜຸ່ມ 3ນາງລ້ຽງລູກໂຕສິງໜຶ່ງໂຕໃຫ້ເຕີບໃຫຍ່ຂຶ້ນ ກາຍເປັນໂຕສິງໜຸ່ມ ມັນຝຶກ
ຫັດຈັບເຫຍື່ອ ແລະມັນກິນຄົນ 4ປະຊາຊາດໄດ້ຍິນເລື່ອງຂອງມັນ ພວກເຂົາກໍຈັບມັນໄດ້ໃນຂຸມ
ຂອງພວກເຂົາ ພວກເຂົາລ່າມໂສ້ໄວ້ ນຳມັນມາຍັງແຜ່ນດິນເອຢິບ 5ເມື່ອແມ່ໂຕສິງເຫັນວ່ານາງ
ຄອຍຖ້າດົນແລ້ວ ແລະຄວາມຫວັງຂອງນາງສູນໄປ ນາງກໍເອົາລູກມາອີກໂຕໜຶ່ງ ລ້ຽງໃຫ້ເປັນ
ສິງໜຸ່ມ 6ມັນໄປໆມາໆທ່າມກາງໂຕສິງ ແລະກາຍເປັນໂຕສິງໜຸ່ມ ແລະມັນຝຶກຫັດຈັບເຫຍື່ອ
ມັນກິນຄົນ 7ມັນຮູ້ຈັກບັນດາປ້ອມປ້ອງກັນທີ່ຮ້າງເປົ່າຂອງພວກເຂົາ ແລະເຮັດໃຫ້ເມືອງທັງ-
ຫລາຍຂອງພວກເຂົາວ່າງເປົ່າ ແຜ່ນດິນ ແລະຄວາມອຸດົມສົມບູນໃນແຜ່ນດິນນັ້ນກໍບໍ່ມີ ເມື່ອໄດ້
ຍິນສຽງຄຳລາມຂອງມັນ 8ແລ້ວບັນດາປະຊາຊາດກໍອ້ອມຕໍ່ສູ້ມັນທຸກດ້ານຈາກແຄວ້ນທັງປວງ
ພວກເຂົາທັງຫລາຍກາງແຫອອກຄຸມມັນ ມັນກໍຖືກຈັບຢູ່ໃນຂຸມຂອງພວກເຂົາທັງຫລາຍ 9ພວກ

ເຂົາລ່າມໂສ້ໄວ້ ພາມັນໄປໄວ້ໃນກົງ ແລະນຳມັນມາຍັງກະສັດບາບີໂລນ ພວກເຂົາກໍຂັງມັນໄວ້
ໃນທີ່ກຳບັງເຂັ້ມແຂງ ເພື່ອບໍ່ໃຫ້ໄດ້ຍິນສຽງຂອງມັນອີກຢູ່ເທິງພູເຂົາຂອງອິສຣາເອນ [10]ແມ່ຂອງ
ເຈົ້າເໝືອນເຄືອອະງຸ່ນທີ່ຢູ່ໃນເລືອດຂອງເຈົ້າ ເອົາມາປູກໄວ້ແຄມນໍ້າ ນາງມີໝາກດົກ ແລະມີ
ກິ່ງງ່າຫລວງຫລາຍຍ້ອນມີນໍ້າບໍລິບູນ [11]ນາງມີກິ່ງງ່າທີ່ແຂງແຮງ ຊຶ່ງກາຍເປັນໄມ້ຄ້ອນເທົ້າຂອງ
ຜູ້ປົກຄອງ ຄວາມສູງຂອງນາງຍົກຂຶ້ນທ່າມກາງກິ່ງງ່າທີ່ໜາທຶບ ນາງປະກົດຕົວໃນບ່ອນສູງ
ຂອງນາງ ພ້ອມກັບກິ່ງງ່າຫລວງຫລາຍຂອງນາງ [12]ແຕ່ວ່ານາງຖືກຖອນອອກດ້ວຍຄວາມຮ້ອນ-
ຮົນ ນາງຖືກຖິ້ມລົງພື້ນດິນ ລົມຕາເວັນອອກເຮັດໃຫ້ຜົນຂອງນາງຫ່ຽວແຫ້ງ ກິ່ງງ່າທີ່ແຂງແຮງກໍ
ຫັກ ແລະຫ່ຽວແຫ້ງໄປ ໄຟກໍໄໝ້ເສຍ [13]ບັດນີ້ ນາງປູກໄວ້ໃນຖິ່ນແຫ້ງແລ້ງກັນດານ ໃນແຜ່ນ-
ດິນທີ່ແຫ້ງແລ້ງກັນດານນໍ້າ [14]ໄຟໄດ້ອອກມາຈາກກິ່ງງ່າໃຫຍ່ນັ້ນ ເຜົາຜານກິ່ງງ່າອື່ນແລະໝາກ
ຈົນໝົດ ຈຶ່ງບໍ່ມີກິ່ງງ່າແຂງແຮງເຫລືອຢູ່ໃນຕົ້ນອີກເລີຍ ບໍ່ມີຄະທາອຳນາດສຳລັບຜູ້ປົກຄອງ ນີ້
ເປັນບົດເພງຄໍ່າຄວນ ແລະໃຊ້ເປັນບົດເພງຄໍ່າຄວນ”

# ບົດທີ 20

## ພຣະເຈົ້າຖືກຕ້ອງເມື່ອລົງໂທດອິສຣາເອນ

[1]ຕໍ່ມາວັນທີສິບ ເດືອນທີຫ້າໃນປີທີເຈັດ ພວກຜູ້ໃຫຍ່ຂອງອິສຣາເອນບາງຄົນໄດ້ມາທູນຖາມ
ພຣະຜູ້ເປັນເຈົ້າ ແລະມານັ່ງຢູ່ຕໍ່ໜ້າຂ້າພະເຈົ້າ [2]ພຣະທຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະ-
ເຈົ້າວ່າ [3]“ບຸດແຫ່ງມະນຸດເອີຍ ຈົ່ງເວົ້າກັບພວກຜູ້ໃຫຍ່ແຫ່ງອິສຣາເອນ ແລະກ່າວແກ່ພວກເຂົາ
ວ່າ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ ທີ່ເຈົ້າມານີ້ ຈະມາຖາມເຮົາບໍ ອົງພຣະຜູ້ເປັນ-
ເຈົ້າພຣະເຈົ້າກ່າວວ່າ ເຮົາມີຊີວິດຢູ່ສັນໃດ ເຮົາກໍຈະບໍ່ຍອມໃຫ້ເຈົ້າມາຖາມເຮົາສັນນັ້ນ [4]ບຸດ
ແຫ່ງມະນຸດເອີຍ ເຈົ້າຈະພິພາກສາພວກເຂົາບໍ ເຈົ້າຈະພິພາກສາພວກເຂົາບໍ ຈົ່ງໃຫ້ພວກເຂົາຮູ້
ເຖິງຄວາມໜ້າກຽດຊັງຂອງບັນພະບູລຸດຂອງເຂົາ [5]ແລະຈົ່ງກ່າວແກ່ພວກເຂົາວ່າ ອົງພຣະຜູ້-
ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ ໃນວັນນັ້ນເມື່ອເຮົາເລືອກສັນອິສຣາເອນໄວ້ ເຮົາປະຕິຍານຕໍ່
ເຊື້ອສາຍແຫ່ງເຊື້ອສາຍຢາໂຄບ ໂດຍສະແດງຕົວເຮົາໃຫ້ພວກເຂົາຮູ້ຈັກໃນແຜ່ນດິນເອຢິບ
ເມື່ອເຮົາປະຕິຍານກັບພວກເຂົາວ່າ ເຮົາເປັນພຣະຜູ້ເປັນເຈົ້າພຣະເຈົ້າຂອງເຈົ້າ [6]ໃນວັນນັ້ນ
ເຮົາປະຕິຍານຕໍ່ພວກເຂົາວ່າ ເຮົາຈະນຳພວກເຂົາອອກຈາກແຜ່ນດິນເອຢິບໄປຍັງແຜ່ນດິນທີ່
ເຮົາຫາໃຫ້ພວກເຂົາທັງຫລາຍ ເປັນແຜ່ນດິນທີ່ມີນໍ້ານົມ ແລະນໍ້າເຜິ້ງໄຫລບໍລິບູນ ເປັນແຜ່ນດິນ
ທີ່ມີສະຫງ່າລາສີທີ່ສຸດໃນແຜ່ນດິນທັງຫລາຍ [7]ແລະເຮົາກ່າວແກ່ພວກເຂົາວ່າ ເຈົ້າທຸກຄົນຈົ່ງຖິ້ມ
ສິ່ງທີ່ໜ້າກຽດຊັງ ຊຶ່ງຕາຂອງເຈົ້າທັງຫລາຍກຳລັງເພີດເພີນຢູ່ນັ້ນ ຢ່າເຮັດຕົວຂອງເຈົ້າໃຫ້ເປັນ
ມົນທິນດ້ວຍຮູບເຄົາລົບຂອງເອຢິບ ເຮົາແມ່ນພຣະຜູ້ເປັນເຈົ້າພຣະເຈົ້າຂອງເຈົ້າ [8]ແຕ່ພວກ
ເຂົາໄດ້ກະບົດຕໍ່ເຮົາ ແລະບໍ່ຍອມຟັງເຮົາ ພວກເຂົາບໍ່ໄດ້ຖິ້ມສິ່ງທີ່ໜ້າກຽດຊັງ ຊຶ່ງຕາຂອງພວກ
ເຂົາທຸກຄົນເພີດເພີນຢູ່ນັ້ນ ທັງບໍ່ໄດ້ປະຖິ້ມຮູບເຄົາລົບຂອງເອຢິບ ແລ້ວເຮົາກໍຄິດວ່າ ເຮົາຈະ
ລະບາຍຄວາມຄຽດຮ້າຍຂອງເຮົາອອກເໜືອພວກເຂົາ ແລະໃຫ້ຄວາມຮ້າຍຂອງເຮົາມີຕໍ່ພວກ
ເຂົາໃນທ່າມກາງແຜ່ນດິນເອຢິບ ຈົນມອດລົງ [9]ແຕ່ເຮົາກໍເຮັດໂດຍເຫັນແກ່ນາມຂອງເຮົາເອງ

ເພື່ອບໍ່ໃຫ້ຊື່ນັ້ນເປັນມົນທິນຕໍ່ໜ້າປະຊາຊາດ ຊຶ່ງພວກເຂົາອາໄສຢູ່ ເຮົາຈຶ່ງໄດ້ສະແດງຕົວຂອງ
ເຮົາຕໍ່ໜ້າພວກເຂົາ ໃຫ້ພວກເຂົາຮູ້ຈັກການທີ່ເຮົານຳຄົນ ອິສຣາເອນ ອອກມາຈາກແຜ່ນດິນ ເອ-
ຢິບ

10ດັ່ງນັ້ນ ເຮົາຈຶ່ງນຳພວກເຂົາອອກຈາກແຜ່ນດິນ ເອຢິບ ແລະນຳເຂົ້າມາໃນຖິ່ນແຫ້ງແລ້ງກັນ-
ດານ 11ເຮົາໃຫ້ກົດເກນຂອງເຮົາແກ່ພວກເຂົາ ແລະສະແດງຂໍ້ຕັດສິນຂອງເຮົາໃຫ້ພວກເຂົາຮູ້
ຊຶ່ງຖ້າມະນຸດໄດ້ຮັກສາໄວ້ກໍຈະດຳລົງຊີວິດຢູ່ໄດ້ 12ຫລາຍກວ່ານັ້ນອີກ ເຮົາໄດ້ໃຫ້ສະບາໂຕ
ຂອງເຮົາແກ່ພວກເຂົາ ເປັນໝາຍສຳຄັນລະຫວ່າງເຮົາ ແລະພວກເຂົາທັງຫລາຍ ເພື່ອພວກເຂົາ
ຈະຮູ້ວ່າ ເຮົາແມ່ນ ພຣະຜູ້ເປັນເຈົ້າ ເປັນຜູ້ເຮັດໃຫ້ເຂົາບໍລິສຸດ 13ແຕ່ເຊື້ອສາຍ ອິສຣາເອນ ໄດ້
ກະບົດຕໍ່ເຮົາໃນຖິ່ນແຫ້ງແລ້ງກັນດານ ພວກເຂົາບໍ່ໄດ້ດຳເນີນຕາມກົດເກນຂອງເຮົາ ແຕ່ໄດ້ປະ-
ຕິເສດບໍ່ຮັບຂໍ້ຕັດສິນຂອງເຮົາ ຊຶ່ງຖ້າມະນຸດໄດ້ຮັກສາໄວ້ກໍຈະດຳລົງຊີວິດຢູ່ໄດ້ ແລະໄດ້ເຮັດໃຫ້
ສະບາໂຕຂອງເຮົາສະຫ້ານໄປຢ່າງໜັກ ແລ້ວເຮົາກໍຄິດວ່າ ເຮົາຈະລະບາຍຄວາມຄຽດຮ້າຍ
ຂອງເຮົາອອກເທິງພວກເຂົາໃນຖິ່ນແຫ້ງແລ້ງກັນດານເພື່ອທຳລາຍພວກເຂົາສາ 14ແຕ່ເຮົາກໍເຮັດ
ໂດຍເຫັນແກ່ນາມຂອງເຮົາເອງ ເພື່ອບໍ່ໃຫ້ຊື່ນັ້ນເປັນມົນທິນຕໍ່ໜ້າປະຊາຊາດທັງຫລາຍ ຊຶ່ງເຮົາ
ໄດ້ນຳຄົນ ອິສຣາເອນ ອອກມາຕໍ່ໜ້າພວກເຂົາ 15ຫລາຍກວ່ານັ້ນອີກ ເຮົາໄດ້ປະຕິຍານຕໍ່ພວກ
ເຂົາໃນຖິ່ນແຫ້ງແລ້ງກັນດານວ່າ ເຮົາຈະບໍ່ນຳພວກເຂົາເຂົ້າມາໃນແຜ່ນດິນຊຶ່ງເຮົາໄດ້ໃຫ້ແກ່
ພວກເຂົາ ເປັນແຜ່ນດິນທີ່ມີນ້ຳນົມ ແລະນ້ຳເຜິ້ງໄຫລບໍລິບູນ ເປັນແຜ່ນດິນທີ່ມີສະຫງ່າລາສີທີ່
ສຸດໃນແຜ່ນດິນທັງຫລາຍ 16ເພາະພວກເຂົາປະຕິເສດບໍ່ຮັບຂໍ້ຕັດສິນຂອງເຮົາ ແລະບໍ່ດຳເນີນ
ຕາມກົດເກນຂອງເຮົາ ແຕ່ໄດ້ເຮັດໃຫ້ສະບາໂຕຂອງເຮົາສະຫ້ານ ເພາະວ່າຈິດໃຈຂອງພວກ
ເຂົາໄປຕິດຕາມຮູບເຄົາລົບຂອງຕົນ 17ເຖິງປານນັ້ນກໍດີ ໃນຕາຂອງເຮົາກໍຍັງປານີພວກເຂົາ
ແລະເຮົາບໍ່ໄດ້ທຳລາຍພວກເຂົາ ຫລືເຮັດໃຫ້ເຂົາຈົບສິ້ນລົງໃນຖິ່ນແຫ້ງແລ້ງກັນດານນັ້ນ

18ແຕ່ເຮົາເວົ້າກັບລູກຫລານຂອງພວກເຂົາໃນຖິ່ນແຫ້ງແລ້ງກັນດານນັ້ນວ່າ ຢ່າດຳເນີນຕາມ
ກົດເກນຂອງບັນພະບູລຸດຂອງເຈົ້າ ຫລືຮັກສາຂໍ້ຕັດສິນຂອງພວກເຂົາ ຫລືເຮັດຕົວເຈົ້າໃຫ້ເປັນ
ມົນທິນດ້ວຍຮູບເຄົາລົບຂອງພວກເຂົາ 19ເຮົາແມ່ນ ພຣະຜູ້ເປັນເຈົ້າ ເປັນ ພຣະເຈົ້າ ຂອງເຈົ້າ ຈົ່ງ
ດຳເນີນຕາມກົດເກນຂອງເຮົາ ແລະຈົ່ງຮັກສາຂໍ້ຕັດສິນຂອງເຮົາ ແລະປະພຶດຕາມ 20ແລະນັບຖື
ຮັກສາວັນສະບາໂຕຂອງເຮົາ ເພື່ອຈະເປັນໝາຍສຳຄັນລະຫວ່າງເຮົາກັບເຈົ້າ ເພື່ອເຈົ້າຈະຮູ້ວ່າ
ເຮົາແມ່ນ ພຣະຜູ້ເປັນເຈົ້າ ເປັນ ພຣະເຈົ້າ ຂອງເຈົ້າ 21ແຕ່ລູກຫລານເຫລົ່ານັ້ນກໍຍັງກະບົດຕໍ່ເຮົາ
ພວກເຂົາທັງຫລາຍບໍ່ໄດ້ດຳເນີນຕາມກົດເກນຂອງເຮົາ ແລະບໍ່ຮັກສາຂໍ້ຕັດສິນຂອງເຮົາ ແລະບໍ່
ປະພຶດຕາມ ຊຶ່ງຖ້າມະນຸດໄດ້ຮັກສາໄວ້ກໍຈະດຳລົງຊີວິດຢູ່ໄດ້ ພວກເຂົາໄດ້ເຮັດໃຫ້ວັນສະບາໂຕ
ຂອງເຮົາສະຫ້ານ ແລ້ວເຮົາກໍຄິດວ່າ ເຮົາຈະລະບາຍຄວາມຄຽດຮ້າຍຂອງເຮົາອອກເທິງພວກ
ເຂົາ ແລະໃຫ້ຄວາມຮ້າຍຂອງເຮົາທີ່ມີຕໍ່ເຂົາໃນຖິ່ນແຫ້ງແລ້ງກັນດານມອດລົງ 22ແຕ່ເຮົາໄດ້ຫົດ
ມືຂອງເຮົາໄວ້ ແລະເຮັດໂດຍເຫັນແກ່ນາມຂອງເຮົາເອງ ເພື່ອບໍ່ໃຫ້ຊື່ນັ້ນເປັນມົນທິນໃນສາຍຕາ
ຂອງປະຊາຊາດທັງຫລາຍ ຊຶ່ງເຮົາໄດ້ນຳຊົນຊາດອິສຣາເອນອອກມາຕໍ່ໜ້າພວກເຂົາ 23ຫລາຍ
ກວ່ານັ້ນອີກ ເຮົາໄດ້ປະຕິຍານຕໍ່ພວກເຂົາໃນຖິ່ນແຫ້ງແລ້ງກັນດານວ່າ ເຮົາຈະໃຫ້ກະຈັດກະ-

ຈາຍໄປໃນທ່າມກາງປະຊາຊາດ ແລະກະຈາຍພວກເຂົາໄປຢູ່ຕາມປະເທດຕ່າງໆ 24ເພາະວ່າ
ພວກເຂົາບໍ່ໄດ້ເຮັດຕາມຂໍ້ຕັດສິນຂອງເຮົາ ແຕ່ໄດ້ປະຕິເສດບໍ່ຮັບກົດເກນຂອງເຮົາ ແລະເຮັດໃຫ້
ວັນສະບາໂຕຂອງເຮົາສະທ້ານ ແລະໃນຕາຂອງພວກເຂົາກໍຈັບຢູ່ທີ່ຮູບເຄົາລົບຂອງບັນພະບູລຸດ
ຂອງຕົນ 25ຫລາຍກວ່ານັ້ນອີກ ເຮົາໄດ້ໃຫ້ກົດເກນທີ່ບໍ່ດີ ແລະໃຫ້ຂໍ້ກົດໝາຍ ຊຶ່ງພວກເຂົາຈະ
ດຳລົງຊີວິດບໍ່ໄດ້ 26ແລະເຮົາກໍໄດ້ໃຫ້ພວກເຂົາເປັນມົນທິນດ້ວຍເຄື່ອງຖວາຍຂອງເຂົາເອງ ໂດຍ
ໃຫ້ພວກເຂົາຖວາຍລູກຫົວປີໃຫ້ລຸຍໄຟ ເພື່ອເຮົາຈະເຮັດໃຫ້ພວກເຂົາຮ້າງເປົ່າ ເພື່ອໃຫ້ພວກເຂົາ
ຮູ້ວ່າເຮົາແມ່ນພຣະຜູ້ເປັນເຈົ້າ

27ເພາະສະນັ້ນ ບຸດແຫ່ງມະນຸດເອີຍ ຈົ່ງເວົ້າກັບເຊື້ອສາຍອິສຣາເອນ ແລະກ່າວແກ່ພວກ
ເຂົາວ່າ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ ໃນເລື່ອງນີ້ບັນພະບູລຸດຂອງເຈົ້າກໍໄດ້ໝິ່ນ-
ປະໝາດເຮົາອີກ ໂດຍໄດ້ເຮັດການລະເມີດຕໍ່ເຮົາ 28ເພາະວ່າເມື່ອເຮົາໄດ້ນຳພວກເຂົາເຂົ້າມາ
ໃນແຜ່ນດິນທີ່ເຮົາປະຕິຍານວ່າຈະໃຫ້ພວກເຂົານັ້ນ ເມື່ອພວກເຂົາເຫັນໂນນພູສູງໃນທີ່ໃດ ຫລື
ເຫັນຕົ້ນໄມ້ໃບດົກທີ່ໃດ ພວກເຂົາກໍຖວາຍເຄື່ອງບູຊາອັນເປັນທີ່ໃຫ້ເຄືອງໃຈເຮົາ ໃນບ່ອນນັ້ນ
ພວກເຂົາໄດ້ຖວາຍກິ່ນທີ່ພໍໃຈ ແລະຖອກເຄື່ອງດື່ມບູຊາອອກບ່ອນນັ້ນ 29ເຮົາໄດ້ຖາມພວກເຂົາ
ວ່າ ສະຖານທີ່ນະມັດສະການສູງຊຶ່ງເຈົ້າເຂົ້າໄປນັ້ນຄືຫຍັງ ແລະພວກເຂົາຈຶ່ງເອີ້ນຊື່ບ່ອນນັ້ນວ່າ
ບາມາ ສືບເນື່ອງມາຈົນເຖິງມື້ວັນນີ້

30ເພາະສະນັ້ນ ຈົ່ງກ່າວແກ່ເຊື້ອສາຍອິສຣາເອນວ່າ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້
ວ່າ ເຈົ້າເຮັດຕົວໃຫ້ເປັນມົນທິນຕາມຢ່າງບັນພະບູລຸດຂອງເຈົ້າ ແລະຫລິ້ນຊູ້ກັບສິ່ງທີ່ໜ້າກຽດຊັງ
ຂອງເຂົາບໍ 31ເມື່ອເຈົ້າຖວາຍເຄື່ອງບູຊາ ແລະຖວາຍລູກຊາຍໃຫ້ລຸຍໄຟ ເຈົ້າໄດ້ເຮັດຕົວໃຫ້ເປັນ
ມົນທິນ ດ້ວຍບັນດາຮູບເຄົາລົບຂອງເຈົ້າຈົນເຖິງທຸກວັນນີ້ ໂອ ເຊື້ອສາຍອິສຣາເອນເອີຍ ເຮົາ
ຈະໃຫ້ເຈົ້າມາຖາມເຮົາບໍ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວວ່າ ເຮົາມີຊີວິດຢູ່ສັນໃດ ເຮົາຈະບໍ່
ໃຫ້ເຈົ້າມາຖາມເຮົາສັນນັ້ນ

32ແມ່ນຫຍັງຢູ່ໃນໃຈຂອງເຈົ້າຈະບໍ່ເກີດຂຶ້ນໄດ້ເລີຍ ຄືຄວາມຄິດທີ່ວ່າ 'ໃຫ້ເຮົາເປັນເໝືອນ
ປະຊາຊາດທັງຫລາຍ ໃຫ້ເປັນເໝືອນຄອບຄົວຕ່າງໆໃນປະເທດຕ່າງໆ ຄືໃຫ້ເຮົາບົວລະບັດໄມ້
ແລະສີລາ.

## ຫລັງຈາກຍຸກເຈັດປີອິສຣາເອນຈະຖືກຊຳລະລ້າງ

33ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວວ່າ ເຮົາມີຊີວິດຢູ່ສັນໃດ ເຮົາຈະປົກຄອງເໜືອເຈົ້າແນ່-
ນອນສັນນັ້ນ ດ້ວຍມືທີ່ມີລິດ ດ້ວຍແຂນທີ່ຢຽດອອກ ແລະດ້ວຍຄວາມພິໂລດທີ່ຖອກລົງມາ
34ເຮົາຈະນຳເຈົ້າອອກມາຈາກຊົນຊາດທັງຫລາຍ ແລະຈະຮວບຮວມເຈົ້າອອກມາຈາກປະເທດ
ທັງປວງທີ່ເຈົ້າຕ້ອງກະຈັດກະຈາຍກັນໄປຢູ່ນັ້ນ ດ້ວຍມືທີ່ມີລິດ ດ້ວຍແຂນທີ່ຢຽດອອກ ແລະ
ດ້ວຍຄວາມພິໂລດທີ່ຖອກລົງມາ 35ເຮົາຈະນຳເຈົ້າເຂົ້າໄປໃນຖິ່ນແຫ້ງແລ້ງກັນດານແຫ່ງຊົນຊາດ
ທັງຫລາຍ ແລະບ່ອນນັ້ນເຮົາຈະເຂົ້າສູ່ການພິພາກສາກັບເຈົ້າໜ້າຕໍ່ໜ້າ 36ເຮົາເຂົ້າສູ່ການພິ-
ພາກສາກັບບັນພະບູລຸດຂອງເຈົ້າໃນຖິ່ນແຫ້ງແລ້ງກັນດານແຫ່ງແຜ່ນດິນເອຢິບຢ່າງໃດ ອົງ
ພຣະຜູ້ເປັນເຈົ້າພຣະເຈົ້າກ່າວວ່າ ເຮົາຈະເຂົ້າສູ່ການພິພາກສາກັບເຈົ້າຢ່າງນັ້ນ 37ເຮົາຈະໃຫ້

ເຈົ້າລອດໄປໃຕ້ຄະທາອຳນາດ ແລະເຮົາຈະໃຫ້ເຈົ້າເຂົ້າໃນພັນທະສັນຍາ
[38]ເຮົາຈະຊຳລະພວກກະບົດຈາກທ່າມກາງເຈົ້າ ທັງຜູ້ທໍລະຍົດຕໍ່ເຮົາ ເຮົາຈະນຳພວກເຂົາອອກຈາກແຜ່ນດິນທີ່ພວກເຂົາໄປອາໄສຢູ່ນັ້ນ ແຕ່ພວກເຂົາຈະບໍ່ໄດ້ເຂົ້າໄປໃນແຜ່ນດິນອິສຣາເອນ ແລ້ວເຈົ້າຈະຮູ້ວ່າເຮົາແມ່ນພຣະຜູ້ເປັນເຈົ້າ

[39]ດຽວນີ້ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ ໂອ ເຊື້ອສາຍອິສຣາເອນເອີຍ ຝ່າຍເຈົ້າທັງຫລາຍທຸກຄົນຈົ່ງໄປບົວລະບັດຮູບເຄົາລົບຂອງເຈົ້າດຽວນີ້ ແລະຕໍ່ໄປ ຖ້າເຈົ້າບໍ່ຟັງເຮົາ ແຕ່ຊື່ອັນບໍລິສຸດຂອງເຮົານັ້ນ ເຈົ້າຢ່າເຮັດໃຫ້ເປັນມົນທິນອີກດ້ວຍເຄື່ອງຖວາຍ ແລະດ້ວຍຮູບເຄົາລົບຂອງເຈົ້າ
[40]ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວວ່າ ດ້ວຍວ່າເທິງພູເຂົາບໍລິສຸດຂອງເຮົາ ຄືພູເຂົາສູງຂອງອິສຣາເອນ ບັນດາເຊື້ອສາຍທັງໝົດຂອງອິສຣາເອນຈະບົວລະບັດເຮົາໃນແຜ່ນດິນນັ້ນ ເຮົາຈະໂຜດພວກເຂົາ ໃນບ່ອນນັ້ນ ເຮົາຈະເອີ້ນເຄື່ອງຖວາຍຂອງເຈົ້າ ແລະຜົນລຸ້ນທຳອິດແຫ່ງເຄື່ອງບູຊາຂອງເຈົ້າ ກັບເຄື່ອງຖວາຍບູຊາອັນບໍລິສຸດທັງໝົດຂອງເຈົ້າ
[41]ເມື່ອເຮົານຳເຈົ້າອອກມາຈາກຊາດທັງຫລາຍ ແລະຮວບຮວມເຈົ້າອອກມາຈາກປະເທດທີ່ເຈົ້າກະຈັດ-ກະຈາຍໄປຢູ່ນັ້ນ ເຮົາຈະໂຜດເຈົ້າເປັນດັ່ງກິ່ນທີ່ພໍໃຈຂອງເຮົາ ແລະເຮົາຈະສະແດງຄວາມບໍລິ-ສຸດຂອງເຮົາທ່າມກາງເຈົ້າ ຕໍ່ໜ້າຕໍ່ຕາປະຊາຊາດທັງຫລາຍ
[42]ແລະເຈົ້າຈະຮູ້ວ່າເຮົາແມ່ນພຣະ-ຜູ້ເປັນເຈົ້າ ໃນເມື່ອເຮົານຳເຈົ້າເຂົ້າໃນແຜ່ນດິນອິສຣາເອນ ອັນເປັນປະເທດຊຶ່ງເຮົາປະຕິຍານໄວ້ວ່າຈະໃຫ້ແກ່ບັນພະບູລຸດຂອງເຈົ້າ
[43]ໃນບ່ອນນັ້ນ ເຈົ້າຈະລະນຶກເຖິງທາງ ແລະການກະທຳທັງໝົດຂອງເຈົ້າ ຊຶ່ງເຈົ້າໄດ້ເຮັດໃຫ້ຕົວຂອງເຈົ້າເປັນມົນທິນ ແລະໃນສາຍຕາຂອງເຈົ້າເອງເຈົ້າຈະກຽດຊັງຕົວຂອງເຈົ້າ ເພາະຄວາມຊົ່ວທັງຫລາຍຊຶ່ງເຈົ້າໄດ້ເຮັດນັ້ນ
[44]ໂອ ເຊື້ອສາຍອິ-ສຣາເອນເອີຍ ເມື່ອເຮົາໄດ້ເຮັດກັບເຈົ້າດ້ວຍເຫັນແກ່ນາມຂອງເຮົາ ບໍ່ແມ່ນຕາມທາງອັນຊົ່ວຂອງເຈົ້າ ຫລືຕາມການກະທຳທີ່ເສື່ອມໂຊມຂອງເຈົ້າ ແລ້ວເຈົ້າຈຶ່ງຈະຮູ້ວ່າເຮົາແມ່ນພຣະຜູ້-ເປັນເຈົ້າ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ແຫລະ”

## ຄຳອຸປະມາເລື່ອງທິດໃຕ້

[45]ພຣະທຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າວ່າ
[46]“ບຸດແຫ່ງມະນຸດເອີຍ ຈົ່ງມຸ່ງໜ້າໄປທາງທິດໃຕ້ ແລະເທດສະໜາກ່າວໂທດພວກທິດໃຕ້ ຈົ່ງປະກາດພຣະທຳຕໍ່ເຂດແດນປ່າໄມ້ທີ່ຢູ່ໃນທິດໃຕ້
[47]ຈົ່ງກ່າວແກ່ປ່າໄມ້ແຫ່ງທິດໃຕ້ວ່າ ຈົ່ງຟັງພຣະທຳຂອງພຣະຜູ້ເປັນເຈົ້າ ອົງພຣະ-ຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ ເບິ່ງແມ ເຮົາຈະກໍ່ໄຟໄວ້ໃນເຈົ້າ ມັນຈະເຜົາຜານຕົ້ນໄມ້ຂຽວແລະຕົ້ນໄມ້ແຫ້ງທຸກຕົ້ນທີ່ຢູ່ໃນເຈົ້າ ຈະດັບແປວໄຟອັນລຸກໄໝ້ນັ້ນບໍ່ໄດ້ ແລະໜ້າທຸກໜ້າຕັ້ງແຕ່ທິດໃຕ້ຈົນເຖິງທິດເໜືອຈະຖືກໄຟລວກ
[48]ເນື້ອໜັງທັງໝົດຈະເຫັນວ່າເຮົາແມ່ນພຣະຜູ້ເປັນເຈົ້າຜູ້ໄດ້ກໍ່ໄຟນັ້ນ ຜູ້ໃດຈະດັບກໍບໍ່ໄດ້”

[49]ແລ້ວຂ້າພະເຈົ້າຈຶ່ງກ່າວວ່າ “ອົງພຣະຜູ້ເປັນເຈົ້າຂ້າ ພວກເຂົາທັງຫລາຍກຳລັງກ່າວເຖິງຂ້າພະອົງວ່າ ລາວບໍ່ແມ່ນເປັນຄົນສ້າງຄຳອຸປະມາເອງບໍ”

# ບົດທີ 21

## ດາບຂອງພຣະຜູ້ເປັນເຈົ້າ

[1]ພຣະທຳຂອງ ພຣະຜູ້ເປັນເຈົ້າ ມາເຖິງຂ້າພະເຈົ້າວ່າ [2]"ບຸດແຫ່ງມະນຸດເອີຍ ຈົ່ງມຸ່ງໜ້າຂອງ
ເຈົ້າຕໍ່ສູ້ ເຢຣູຊາເລັມ ແລະເທດສະໜາກ່າວໂທດສະຖານທີ່ບໍລິສຸດທັງຫລາຍ ຈົ່ງປະກາດພຣະ-
ທຳກ່າວໂທດແຜ່ນດິນ ອິສຣາເອນ [3]ແລະກ່າວແກ່ແຜ່ນດິນ ອິສຣາເອນ ວ່າ ພຣະຜູ້ເປັນເຈົ້າ ກ່າວ
ດັ່ງນີ້ວ່າ ເບິ່ງແມ ເຮົາເປັນສັດຕູກັບເຈົ້າ ແລະເຮົາຈະຖອດດາບຂອງເຮົາອອກຈາກຝັກ ແລະ
ເຮົາຈະຕັດທັງຄົນຊອບທຳ ແລະຄົນຊົ່ວອອກຈາກເຈົ້າ [4]ເພາະເຮົາຈະຕັດເອົາທັງຄົນຊອບທຳ
ແລະຄົນຊົ່ວອອກຈາກເຈົ້າເສຍ ເພາະສະນັ້ນ ດາບຂອງເຮົາຈະອອກຈາກຝັກໄປຕໍ່ສູ້ເນື້ອໜັງທັງ
ໝົດຈາກທິດໃຕ້ເຖິງທິດເໜືອ [5]ເພື່ອເນື້ອໜັງທັງໝົດຈະຮູ້ວ່າເຮົາແມ່ນ ພຣະຜູ້ເປັນເຈົ້າ ໄດ້ຊັກ
ດາບຂອງເຮົາອອກຈາກຝັກແລ້ວ ແລະຈະບໍ່ເກັບໃສ່ຝັກອີກ

[6]ບຸດແຫ່ງມະນຸດເອີຍ ເພາະສະນັ້ນ ຈົ່ງຖອນຫາຍໃຈ ຖອນຫາຍໃຈດ້ວຍຄວາມລະທົມໃຈ
ແລະຄວາມຂົມຂື່ນຕໍ່ໜ້າຕໍ່ຕາພວກເຂົາທັງຫລາຍ [7]ແລະເມື່ອພວກເຂົາກ່າວແກ່ເຈົ້າວ່າ 'ເປັນ
ຫຍັງເຈົ້າຈຶ່ງຖອນຫາຍໃຈ' ເຈົ້າຈົ່ງກ່າວວ່າ 'ເພາະເລື່ອງຂ່າວນັ້ນເມື່ອຂ່າວນັ້ນມາເຖິງ ຫົວໃຈ
ທຸກດວງຈະລະລາຍ ແລະມືທັງໝົດຈະອ່ອນເພຍໄປ ແລະບັນດາຈິດວິນຍານຈະຢ້ານກົວ ຫົວ-
ເຂົ່າທຸກເຂົ່າຈະອ່ອນລົງເໝືອນດັ່ງນ້ຳ ເບິ່ງແມ ຂ່າວນັ້ນມາເຖິງ ແລະຈະສຳເລັດ' ອົງພຣະຜູ້-
ເປັນເຈົ້າ ພຣະເຈົ້າ ກ່າວດັ່ງນີ້ແຫລະ"

## ພຣະເຈົ້າໄດ້ຝົນດາບຂອງພຣະອົງໃຫ້ຄົມ

[8]ພຣະທຳຂອງ ພຣະຜູ້ເປັນເຈົ້າ ມາເຖິງຂ້າພະເຈົ້າອີກວ່າ [9]"ບຸດແຫ່ງມະນຸດເອີຍ ຈົ່ງປະກາດ
ພຣະທຳ ແລະກ່າວວ່າ ພຣະຜູ້ເປັນເຈົ້າ ກ່າວດັ່ງນີ້ວ່າ ດາບເຫລັ້ມໜຶ່ງ ຊຶ່ງເຂົາຝົນໃຫ້ຄົມ ແລະ
ຂັດມັນໃຫ້ເຫລື້ອມ [10]ຝົນໃຫ້ຄົມເພື່ອຈະຂ້າຟັນ ຂັດມັນໄວ້ເພື່ອຈະໃຫ້ເຫລື້ອມ ເຮົາຈະຊື່ນບານບໍ
ດາບນັ້ນໄດ້ປະໝາດຄະທາອຳນາດແຫ່ງລູກຊາຍຂອງເຮົາ ເໝືອນຕົ້ນໄມ້ທຸກຢ່າງ [11]ເພາະສະ-
ນັ້ນ ຈຶ່ງມອບດາບໃຫ້ຂັດມັນ ເພື່ອຈະຖືໄວ້ໄດ້ ດາບນັ້ນຄົມ ແລະຂັດມັນ ເພື່ອຈະມອບໄວ້ໃນມື
ຂອງຜູ້ຂ້າ [12]ບຸດແຫ່ງມະນຸດເອີຍ ຈົ່ງຮ້ອງໄຫ້ ແລະຮ້ອງຄາງສາ ເພາະເປັນເລື່ອງຕໍ່ສູ້ກັບປະ-
ຊາຊົນຂອງເຮົາ ແລະຕໍ່ສູ້ກັບບັນດາເຈົ້ານາຍຂອງ ອິສຣາເອນ ຄວາມຢ້ານກົວ ຍ້ອນດາບນັ້ນ
ຈະຢູ່ເໜືອປະຊາຊົນຂອງເຮົາ ເພາະສະນັ້ນ ຈົ່ງຕີກົກຂາຂອງເຈົ້າສາ

[13]ເພາະມີການທົດລອງ ແລະຖ້າດາບໄດ້ໝິ່ນປະໝາດ ຄະທາອຳນາດນັ້ນ ກໍຈະບໍ່ມີອີກ ອົງ
ພຣະຜູ້ເປັນເຈົ້າ ພຣະເຈົ້າ ກ່າວດັ່ງນີ້

[14] ບຸດແຫ່ງມະນຸດເອີຍ ເພາະສະນັ້ນ ຈົ່ງປະກາດພຣະທຳ ຈົ່ງຕົບມື
ແລະປ່ອຍໃຫ້ດາບລົງມາສອງເທື່ອ ເອີ ສາມເທື່ອ
ຄືດາບສຳລັບຄົນເຫລົ່ານັ້ນທີ່ຈະຖືກຂ້າ
ເປັນດາບຂອງຄົນສຳຄັນທີ່ຖືກຂ້າ ຊຶ່ງໄດ້ເຂົ້າໄປໃນຫ້ອງສ່ວນຕົວ
[15] ເພື່ອວ່າໃຈຂອງພວກເຂົາຈະລະລາຍ
ແລະເພື່ອບ່ອນຮ້າງເປົ່າຂອງພວກເຂົາຈະທະວີຄູນ

ເຮົາຈຶ່ງໄດ້ມອບທິດດາບນັ້ນທີ່ປະຕູເມືອງທັງໝົດຂອງພວກເຂົາແລ້ວ
ເຮັດເສຍເໝືອນຢ່າງກັບຟ້າແລບ ພວກເຂົາຂັດມັນເພື່ອຈະຂ້າຟັນ
16 ລວມກັນເຂົ້າມາ ໄປທາງຂວາລຽງແຖວ
ແລ້ວໄປທາງຊ້າຍ ບໍ່ວ່າໜ້າຂອງເຈົ້າມຸ້ງໄປທາງໃດ
17 ເຮົາຈະຕົບມືຂອງເຮົາ ແລະເຮົາຈະລະບາຍຄວາມຮ້າຍຂອງເຮົາຈົນໝົດ
ເຮົາແມ່ນພຣະຜູ້ເປັນເຈົ້າໄດ້ລັ່ນຄຳເວົ້າແລ້ວ”
ຈະບໍ່ມີກະສັດໃນອິສຣາເອນຈົນກວ່າພຣະຜູ້ຊ່ອຍໃຫ້ລອດພົ້ນຈະສະເດັດມາ

18 ພຣະທຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າອີກວ່າ 19 “ບຸດແຫ່ງມະນຸດເອີຍ ຈົ່ງຂີດ
ທາງໄວ້ສອງທາງໃຫ້ດາບແຫ່ງກະສັດບາບີໂລນເຂົ້າມາ ທັງສອງທາງໃຫ້ອອກມາຈາກແຜ່ນດິນ
ດຽວກັນ ແລະຈົ່ງຈັດແຈງທາງ ຈົ່ງເຮັດໄວ້ທີ່ຫົວຖະໜົນຢູ່ທາງເຂົ້າໄປຫາກຸງ 20 ເຮັດທາງໜຶ່ງໃຫ້
ດາບມາຍັງຣັບບາແຫ່ງຄົນອຳໂມນ ແລະມາເຖິງຢູດາໃນເຢຣູຊາເລັມເມືອງທີ່ມີກຳແພງ
21 ເພາະວ່າກະສັດບາບີໂລນຢືນຢູ່ທີ່ທາງແຍກ ຢູ່ຫົວຖະໜົນສອງຖະໜົນ ກຳນົດຫາຄຳທຳນວຍ
ເພິ່ນແກວ່ງລູກທະນູ ແລະປຶກສານຳຮູບໂຄລົບຂອງຕົນ ເພິ່ນເບິ່ງທີ່ຕັບຂອງສັດ 22 ໃນມືເບື້ອງ
ຂວາ ເພິ່ນມີສະຫລາກເຢຣູຊາເລັມ ເພື່ອຕັ້ງເຄື່ອງທຳລາຍ ເພື່ອຈະໃຫ້ອ້າປາກໃນການຂ້າ
ເພື່ອສົ່ງສຽງດັງ ເພື່ອວາງເຄື່ອງທຳລາຍກຳແພງເຂົ້າທີ່ປະຕູເມືອງ ເພື່ອສ້າງປ້ອມປ້ອງກັນ ແລະ
ກໍ່ກຳແພງອ້ອມ 23 ໃນສາຍຕາຄົນເຫລົ່ານັ້ນ ຄືຄົນທີ່ໃຫ້ຄຳປະຕິຍານແລ້ວ ກໍຈະເປັນເໝືອນຄຳ
ທຳນວຍບໍ່ຈິງ ແຕ່ເພິ່ນຈະລະນຶກເຖິງຄວາມຊົ່ວຊ້າ ເພື່ອພວກເຂົາທັງຫລາຍຈະຖືກຈັບເອົາໄປ

24 ເພາະສະນັ້ນ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ ເພາະວ່າເຈົ້າໄດ້ເຮັດຄວາມຊົ່ວ-
ຊ້າຂອງເຈົ້າໃຫ້ເຮົາລະນຶກໄດ້ ໂດຍການທໍລະຍົດຂອງເຈົ້າທີ່ເຜີຍອອກຈົນບາບຂອງເຈົ້າປະກົດ
ໃນການກະທຳທັງໝົດຂອງເຈົ້າ ເຮົາໄດ້ລະນຶກເຖິງເຈົ້າ ເຈົ້າຈຶ່ງຕ້ອງຖືກຈັບເອົາໄປໂດຍມື

25 ແລະເຈົ້າ ຄົນຊົ່ວທີ່ໜ້າກຽດຊັງຄື ເຈົ້ານາຍອິສຣາເອນເອີຍ
ຜູ້ທີ່ວັນກຳນົດມາເຖິງແລ້ວ ຄືເວລາແຫ່ງການລົງໂທດຄວາມຊົ່ວຊ້າເທື່ອສຸດທ້າຍ
26 ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ ຈົ່ງຖອດຜ້າຄຽນຫົວ
ແລະຖອດມົງກຸດອອກເສຍ ສິ່ງຕ່າງໆຈະບໍ່ຄົງຢູ່ເໝືອນທີ່ເຄີຍເປັນ
ໃຫ້ຍົກຍ້ອງຄົນທີ່ຕ່ຳຂຶ້ນ ແລະໃຫ້ກົດຄົນທີ່ສູງລົງ
27 ເຮົາຈະເຮັດໃຫ້ເປັນທີ່ພັງທະລາຍ ພັງທະລາຍ ພັງທະລາຍ
ແລະຈະບໍ່ມີອີກຕໍ່ໄປຈົນກວ່າຜູ້ມີສິດອັນຊອບທຳຈະມາເຖິງ
ແລະເຮົາຈະປະທານໃຫ້ແກ່ເພິ່ນຜູ້ນັ້ນ

28 ບຸດແຫ່ງມະນຸດເອີຍ ເຈົ້າຈົ່ງປະກາດພຣະທຳແລະກ່າວວ່າ ອົງພຣະຜູ້ເປັນເຈົ້າພຣະເຈົ້າ
ກ່າວດັ່ງນີ້ກ່ຽວກັບຄົນອຳໂມນ ກ່ຽວກັບເລື່ອງໜ້າຕຳໜິຂອງພວກເຂົາວ່າ ດາບເຫລັ້ມໜຶ່ງ ຖືກ
ຖອດອອກ ເຂົາຂັດມັນເພື່ອການຂ້າຟັນ ເຂົາໃຫ້ມັນດື່ມເລືອດເພາະມັນເຫລື້ອມ 29 ຂະນະທີ່
ພວກເຂົາເຫັນນິມິດບໍ່ຈິງມາບອກເພິ່ນ ຂະນະທີ່ພວກເຂົາໃຫ້ຄຳທຳນວຍຂີ້ຕົວະແກ່ເພິ່ນ ເພື່ອຈະ
ວາງເພິ່ນໄວ້ເທິງຄໍຂອງຄົນຊົ່ວທີ່ຖືກຂ້າ ເວລາກຳນົດຂອງເຂົາມາເຖິງແລ້ວ ຄືເວລາແຫ່ງການ

ລົງໂທດຄວາມຊົ່ວຊ້າເທື່ອສຸດທ້າຍ [30]ເຮົາຈະໃຫ້ດາບກັບເຂົ້າຝັກອີກບໍ ເຮົາຈະພິພາກສາເຈົ້າໃນ
ສະຖານທີ່ທີ່ເຈົ້າຖືກສ້າງຂຶ້ນ ໃນແຜ່ນດິນດັ້ງເດີມຂອງເຈົ້າ [31]ເຮົາຈະຖອກຄວາມຄຽດຮ້າຍຂອງ
ເຮົາເໜືອເຈົ້າ ແລະເຮົາຈະພົ່ນເຈົ້າດ້ວຍໄຟແຫ່ງຄວາມພິໂລດຂອງເຮົາ ແລະເຮົາຈະມອບເຈົ້າ
ໄວ້ໃນມືຂອງຄົນໂງ່ ຜູ້ມີຝີມືໃນການທຳລາຍ [32]ເຈົ້າຈະເປັນຟືນໄວ້ໃສ່ໄຟ ເລືອດຂອງເຈົ້າຈະຢູ່
ກາງແຜ່ນດິນ ຈະບໍ່ມີໃຜຈົດຈຳເຈົ້າໄວ້ອີກ ເພາະເຮົາແມ່ນພຣະຜູ້ເປັນເຈົ້າໄດ້ລັ່ນຄຳເວົ້າແລ້ວ"

# ບົດທີ 22

## ບັນດາຄວາມບາບຂອງອິສຣາເອນ

[1]ພຣະທຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າອີກວ່າ [2]"ບຸດແຫ່ງມະນຸດເອີຍ ຕົວເຈົ້າຈະ
ພິພາກສາບໍ ເຈົ້າຈະພິພາກສາເມືອງທີ່ເປິເປື້ອນດ້ວຍເລືອດນັ້ນບໍ ດັ່ງນັ້ນ ເຈົ້າຈົ່ງໃຫ້ມັນຮູ້ຈັກ
ບັນດາການກະທຳອັນໜ້າກຽດຊັງຂອງເມືອງນັ້ນໃຫ້ເມືອງນັ້ນຟັງ [3]ເຈົ້າຈົ່ງກ່າວວ່າ ອົງພຣະຜູ້-
ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ ນີ້ເປັນເມືອງທີ່ເຮັດໃຫ້ຄົນເລືອດຕົກຢູ່ທີ່ກາງຕົນເອງເພື່ອໃຫ້ເວ-
ລາກຳນົດຂອງຕົນມາເຖິງ ແລະເປັນເມືອງທີ່ເຮັດຮູບເຄົາລົບໄວ້ ໃຫ້ຕົນເປັນມົນທິນ [4]ເຈົ້າມີ
ຄວາມຊົ່ວດ້ວຍເລືອດທີ່ເຈົ້າໄດ້ເຮັດໃຫ້ຕົກນັ້ນ ແລະເປັນມົນທິນດ້ວຍຮູບເຄົາລົບທີ່ເຈົ້າເຮັດໄວ້
ແລະເຈົ້າໄດ້ຊັກນຳໃຫ້ເວລາຂອງເຈົ້າເຂົ້າມາໃກ້ ເວລາກຳນົດແຫ່ງປີຂອງເຈົ້າມາເຖິງແລ້ວ
ເພາະສະນັ້ນ ເຮົາຈຶ່ງເຮັດເຈົ້າໃຫ້ເປັນທີ່ປະນາມແກ່ປະຊາຊາດ ແລະເປັນທີ່ເຍາະເຍີ້ຍແກ່ປະ-
ເທດທັງຫລາຍ [5]ຜູ້ທີ່ຢູ່ໃກ້ ແລະທີ່ຢູ່ໄກເຈົ້າຈະເຍາະເຍີ້ຍເຈົ້າ ຜູ້ເປັນເມືອງທີ່ເສຍຊື່ ແລະເຕັມ
ໄປດ້ວຍຄວາມວຸ້ນວາຍ

[6]ເບິ່ງແມ ເຈົ້ານາຍແຫ່ງອິສຣາເອນ ທຸກຄົນຊຶ່ງຢູ່ໃນເຈົ້າກໍເນັ້ງໄປໃນທາງທີ່ເຮັດໃຫ້ຄົນ
ເລືອດຕົກຕາມອຳນາດຂອງຕົນ [7]ບິດາມານດາຖືກໝິ່ນປະໝາດຢູ່ໃນເຈົ້າ ຄົນຕ່າງດ້າວທີ່ອາໄສ
ຢູ່ກໍຖືກຂົ່ມເຫັງຢູ່ທ່າມກາງເຈົ້າ ລູກກຳພ້າພໍ່ ແລະແມ່ໝ້າຍກໍຖືກຂົ່ມເຫັງຢູ່ໃນເຈົ້າ [8]ເຈົ້າໄດ້ໝິ່ນ-
ປະໝາດສິ່ງທີ່ບໍລິສຸດຂອງເຮົາ ແລະເຮັດໃຫ້ສະບາໂຕຂອງເຮົາສະທ້ານ [9]ໃນເຈົ້າມີຄົນກ່າວ
ຮ້າຍເພື່ອຈະເຮັດໃຫ້ຄົນເລືອດຕົກ ແລະມີຄົນໃນເຈົ້າທີ່ຮັບປະທານເທິງພູເຂົາ ມີຄົນເຮັດການ
ອັນໜ້າກຽດຊັງທ່າມກາງເຈົ້າ [10]ໃນເຈົ້າມີຊາຍບາງຄົນໄດ້ເຫັນຄວາມເປືອຍຂອງພໍ່ ໃນເຈົ້າມີຄົນ
ທີ່ຂົ່ມຂືນຜູ້ຍິງທີ່ຍັງມີມົນທິນ ເພາະມີປະຈຳເດືອນ [11]ຄົນໜຶ່ງເຮັດໜ້າກຽດຊັງກັບເມຍຂອງເພື່ອນ
ບ້ານ ອີກຄົນໜຶ່ງຂົ່ມຂືນລູກສະໃພ້ຂອງຕົນຢ່າງໜ້າກຽດຊັງ ໃນເຈົ້າມີອີກຄົນໜຶ່ງທີ່ຂົ່ມຂືນນ້ອງ
ສາວຄືລູກສາວຂອງພໍ່ຂອງຕົນ [12]ໃນເຈົ້າມີຄົນຮັບສິນບົນເພື່ອເຮັດໃຫ້ຄົນເລືອດຕົກ ເຈົ້າເອົາ
ດອກເບ້ຍ ແລະເອົາເງິນເພີ່ມ ຫາກຳໄລຈາກເພື່ອນບ້ານຂອງເຈົ້າໂດຍການບີບບັງຄັບ ແລະເຈົ້າ
ໄດ້ລືມເຮົາເສຍ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ແຫລະ

[13]ເບິ່ງແມ ເພາະສະນັ້ນ ເຮົາຕົບມືຂອງເຮົາເນື່ອງຈາກຜົນກຳໄລອະທຳທີ່ເຈົ້າໄດ້ຮັບ ແລະ
ເນື່ອງຈາກເລືອດທີ່ຢູ່ໃນໝູ່ພວກເຈົ້າທັງຫລາຍ [14]ໃຈເຈົ້າຈະທົນໄດ້ບໍ ແລະມືຂອງເຈົ້າຈະແຂງ-
ແຮງຢູ່ບໍ ໃນວັນທີ່ເຮົາຈະເອົາເລື່ອງກັບເຈົ້າ ເຮົາແມ່ນພຣະຜູ້ເປັນເຈົ້າໄດ້ລັ່ນຄຳເວົ້າແລ້ວ ແລະ
ເຮົາຈະເຮັດຕາມນັ້ນ [15]ເຮົາຈະໃຫ້ເຈົ້າກະຈັດກະຈາຍໄປໃນໝູ່ປະຊາຊາດ ແລະກະຈາຍເຂົ້າໄປ

ຕາມປະເທດຕ່າງໆ ແລະເຮົາຈະເຜົາເອົາຄວາມເປິເປື້ອນອອກຈາກເຈົ້າເສຍ [16]ໃນສາຍຕາຂອງ
ປະຊາຊາດ ເຈົ້າຈະເປັນມົນທິນເພາະຕົວເຈົ້າເອງ ແລະເຈົ້າຈະຮູ້ວ່າເຮົາແມ່ນ ພຣະຜູ້ເປັນເຈົ້າ”

## ອິສຣາເອນເປັນໂລຫະ ທີ່ມີຄວາມເປິເປື້ອນໃນເຕົາຫລອມ

[17]ພຣະທຳຂອງ ພຣະຜູ້ເປັນເຈົ້າ ມາເຖິງຂ້າພະເຈົ້າວ່າ [18]“ບຸດແຫ່ງມະນຸດເອີຍ ສຳລັບເຮົາ
ເຊື້ອສາຍ ອິສຣາເອນ ກາຍເປັນຂີ້ໂລຫະ ພວກເຂົາທັງໝົດເປັນທອງເຫລືອງ ກົ່ວ ເຫລັກ ແລະ
ຊືນໃນເຕົາຫລອມ ພວກເຂົາເປັນຂີ້ໂລຫະເງິນໝົດ [19]ເພາະສະນັ້ນ ອົງ ພຣະຜູ້ເປັນເຈົ້າ ພຣະ-
ເຈົ້າ ກ່າວດັ່ງນີ້ວ່າ ເພາະວ່າເຈົ້າເປັນຂີ້ໂລຫະ ທັງໝົດແລ້ວ ເພາະສະນັ້ນ ເບິ່ງແມ ເຮົາຈະ
ຮວບຮວມເຈົ້າໄວ້ທ່າມກາງ ເຢຣູຊາເລັມ [20]ຄືກັບຄົນທີ່ເຂົາຮວບຮວມເງິນ ທອງເຫລືອງ ເຫລັກ
ຊືນ ແລະກົ່ວໄວ້ໃນເຕົາຫລອມ ເພື່ອເອົາໄຟພົ່ນໃຫ້ມັນລະລາຍ ດັ່ງນັ້ນ ເຮົາຈະຮວບຮວມເຈົ້າ
ດ້ວຍຄວາມຄຽດຮ້າຍ ແລະດ້ວຍຄວາມພິໂລດຂອງເຮົາ ເຮົາຈະໃສ່ເຈົ້າລວມໄວ້ໃຫ້ເຈົ້າເປື່ອຍ
ໄປ [21]ເຮົາຈະຮວບຮວມເຈົ້າ ແລະເອົາແປວໄຟແຫ່ງຄວາມພິໂລດຂອງເຮົາພົ່ນເຈົ້າ ແລະເຈົ້າຈະ
ເປື່ອຍຢູ່ທ່າມກາງສິ່ງນັ້ນ [22]ເງິນເປື່ອຍຢູ່ໃນເຕົາຫລອມສັນໃດ ເຈົ້າທັງຫລາຍຈະເປື່ອຍຢູ່ທ່າມ-
ກາງແປວໄຟສັນນັ້ນ ແລະເຈົ້າຈະຮູ້ວ່າ ເຮົາແມ່ນ ພຣະຜູ້ເປັນເຈົ້າ ໄດ້ຖອກຄວາມຄຽດຮ້າຍຂອງ
ເຮົາລົງເໜືອເຈົ້າ”

[23]ແລະພຣະທຳຂອງ ພຣະຜູ້ເປັນເຈົ້າ ມາເຖິງຂ້າພະເຈົ້າວ່າ [24]“ບຸດແຫ່ງມະນຸດເອີຍ ຈົ່ງເວົ້າ
ກັບແຜ່ນດິນນັ້ນວ່າ ເຈົ້າເປັນແຜ່ນດິນທີ່ບໍ່ໄດ້ຮັບການຊຳລະ ຫລືຝົນບໍ່ໄດ້ຕົກໃສ່ໃນວັນພິໂລດ
[25]ມີການວາງແຜນຮ້າຍລະຫວ່າງພວກຜູ້ປະກາດພຣະທຳທ່າມກາງແຜ່ນດິນນັ້ນ ເປັນເໝືອນໂຕ
ສິງຄຳລາມຈີກເຫຍື່ອຢູ່ ພວກເຂົາທັງຫລາຍກິນຊີວິດມະນຸດ ປຸ້ນຊັບສົມບັດ ແລະສິ່ງປະເສີດໄປ
ພວກເຂົາໄດ້ເຮັດໃຫ້ເກີດແມ່ໝ້າຍຂຶ້ນຢ່າງຫລວງຫລາຍທ່າມກາງແຜ່ນດິນນັ້ນ [26]ປະໂລຫິດ
ຂອງພວກເຂົາໄດ້ລະເມີດພຣະບັນຍັດຂອງເຮົາແລະໄດ້ໝິ່ນປະໝາດສິ່ງບໍລິສຸດຂອງເຮົາໃຫ້ເປັນ
ມົນທິນໄປ ສິ່ງທີ່ບໍລິສຸດ ແລະສິ່ງທີ່ສາມັນ ພວກເຂົາກໍບໍ່ແຍກໃຫ້ຕ່າງກັນ ພວກເຂົາບໍ່ໄດ້ສອນ-
ຄວາມແຕກຕ່າງລະຫວ່າງສິ່ງທີ່ເປັນມົນທິນ ແລະທີ່ສະອາດ ພວກເຂົາໄດ້ເຊື່ອງໃນຕາຂອງຕົນ
ໄວ້ຈາກວັນສະບາໂຕຂອງເຮົາ ດັ່ງນັ້ນແຫລະ ເຮົາຈຶ່ງໝົດກຽດໃນທ່າມກາງພວກເຂົາທັງຫລາຍ
[27]ເຈົ້ານາຍໃນທ່າມກາງແຜ່ນດິນເປັນເໝືອນໝາປ່າທີ່ຈີກເຫຍື່ອ ເຮັດໃຫ້ຄົນເລືອດຕົກ ທຳລາຍ
ຊີວິດເພື່ອຈະເອົາກຳໄລອັນບໍ່ສັດຊື່ [28]ແລະຜູ້ປະກາດພຣະທຳຂອງແຜ່ນດິນນັ້ນກໍໂບກດ້ວຍປູນ
ຂາວ ໃຫ້ພວກເຂົາເຫັນນິມິດບໍ່ຈິງ ແລະໃຫ້ຄຳທຳນວຍຂີ້ຕົວະແກ່ພວກເຂົາ ໂດຍກ່າວວ່າ ‘ອົງ
ພຣະຜູ້ເປັນເຈົ້າ ພຣະເຈົ້າ ກ່າວດັ່ງນີ້’ ທັງທີ່ ພຣະຜູ້ເປັນເຈົ້າ ບໍ່ໄດ້ກ່າວເລີຍ [29]ປະຊາຊົນແຫ່ງ
ແຜ່ນດິນເຮັດການບີບຄັ້ນ ແລະຍາດຊິງເອົາ ພວກເຂົາບີບບັງຄັບຄົນຍາກຈົນ ແລະຄົນຂັດສົນ
ບີບຄັ້ນຄົນຕ່າງດ້າວທີ່ອາໄສຢູ່ຢ່າງຍຸດຕິທຳ

[30]ເຮົາສະແຫວງຫາຈັກຄົນໜຶ່ງໃນພວກເຂົາ ຊຶ່ງຈະສ້າງຮົ້ວ ແລະຢືນຢູ່ໃນຊ່ອງວ່າງຕໍ່ໜ້າເຮົາ
ເພື່ອແຜ່ນດິນນັ້ນ ເພື່ອເຮົາຈະບໍ່ໄດ້ທຳລາຍມັນເສຍ ແຕ່ກໍຫາບໍ່ໄດ້ຈັກຄົນດຽວ [31]ສະນັ້ນ ເຮົາ
ຈຶ່ງຖອກຄວາມຄຽດຮ້າຍຂອງເຮົາລົງເໜືອພວກເຂົາ ເຮົາໄດ້ເຜົາຜານພວກເຂົາດ້ວຍແປວໄຟພິ-
ໂລດຂອງເຮົາ ເຮົາໄດ້ຕອບແທນຕາມການປະພຶດຂອງພວກເຂົາເທິງຫົວຂອງເຂົາ ອົງ ພຣະຜູ້-

ເປັນເຈົ້າ ພຣະເຈົ້າກ່າວດັ່ງນີ້ແຫລະ”

# ບົດທີ 23

## ຄຳອຸປະມາເລື່ອງເອື້ອຍນ້ອງສອງຄົນ

[1]ພຣະທຳຂອງ ພຣະຜູ້ເປັນເຈົ້າ ມາເຖິງຂ້າພະເຈົ້າອີກວ່າ [2]“ບຸດແຫ່ງມະນຸດເອີຍ ມີຜູ້ຍິງສອງ
ຄົນ ເປັນລູກສາວແມ່ດຽວກັນ [3]ນາງຫລິ້ນຊູ້ໃນ ເອຢິບ ນາງຫລິ້ນຊູ້ຕັ້ງແຕ່ຍັງເປັນສາວ ໃນທີ່
ນັ້ນ ຮ່າງກາຍຂອງນາງຖືກເຂົາຄຶງ ແລະເອິກພົມມະຈາລີຂອງນາງກໍຖືກຈັບຕ້ອງ [4]ຜູ້ເອື້ອຍຊື່
ໂອໂຮລາ ແລະໂອໂຮລີບາເປັນຊື່ນ້ອງສາວ ທັງສອງມາເປັນຂອງເຮົາ ທັງສອງເກີດລູກຊາຍຍິງ
ເລື່ອງຊື່ນັ້ນ ໂອໂຮລາຄື ຊາມາເຣຍ ແລະໂອໂຮລີບາຄື ເຢຣູຊາເລັມ
[5]ໂອໂຮລາຫລິ້ນຊູ້ເມື່ອນາງເປັນຂອງເຮົາ ນາງຫລົງໄຫລພວກຄົນຮັກຂອງນາງ ຄືອັດຊີເຣຍ
ເພື່ອນບ້ານຂອງນາງ [6]ຊຶ່ງແຕ່ງກາຍສີມ່ວງ ເປັນເຈົ້າເມືອງ ແລະຜູ້ບັງຄັບບັນຊາ ທຸກຄົນເປັນ
ຊາຍໜຸ່ມທີ່ປາດຖະໜາ ພົນທະຫານມ້າຂີ່ມ້າ [7]ນາງຫລິ້ນຊູ້ກັບຄົນເຫລົ່ານີ້ ຊຶ່ງເປັນບຸກຄົນທີ່ຄັດ
ເລືອກແລ້ວຂອງ ອັດຊີເຣຍ ທຸກຄົນ ແລະນາງກໍເຮັດຕົວໃຫ້ເປັນມົນທິນດ້ວຍຮູບເຄົາລົບຂອງທຸກ
ຄົນທີ່ນາງຫລົງໄຫລນັ້ນ [8]ນາງບໍ່ໄດ້ເລີກການຫລິ້ນຊູ້ ຊຶ່ງນາງໄດ້ນຳມາຈາກ ເອຢິບ ເພາະວ່າ
ເມື່ອຍັງສາວຢູ່ຄົນໜຸ່ມກໍເຂົ້ານອນກັບນາງ ແລະຈັບຕ້ອງເອິກພົມມະຈາລີຂອງນາງ ແລະຖອກ
ລາຄະຕັນຫາຂອງເຂົາໃຫ້ແກ່ນາງ [9]ເພາະສະນັ້ນ ເຮົາຈຶ່ງມອບນາງໃຫ້ຕົກຢູ່ໃນມືພວກຄົນຮັກ
ຂອງນາງ ຄືໃນມືຄົນ ອັດຊີເຣຍ ຊຶ່ງນາງຫລົງໄຫລນັ້ນ [10]ຄົນເຫລົ່ານີ້ເຜີຍຄວາມເປືອຍຂອງນາງ
ພວກເຂົາຈັບລູກຊາຍຍິງຂອງນາງ ແລະຂ້ານາງດ້ວຍດາບນາງຈຶ່ງເປັນຄຳເຍາະເຍີ້ຍໃນທ່າມ-
ກາງຜູ້ຍິງທັງຫລາຍ ເມື່ອໄດ້ພິພາກສາລົງໂທດນາງແລ້ວ
[11]ເມື່ອ ໂອໂຮລີບາ ນ້ອງສາວຂອງນາງ ເຫັນເຊັ່ນນັ້ນ ນາງກໍເຮັດຫລາຍກວ່າເອື້ອຍໃນເລື່ອງ
ການຫລົງໄຫລ ແລະໃນການຫລິ້ນຊູ້ ຊຶ່ງກໍເຮັດຫລາຍກວ່າເອື້ອຍ [12]ນາງຫລົງໄຫລ ອັດຊີເຣຍ
ເພື່ອນບ້ານຂອງນາງ ເຈົ້າເມືອງແລະຜູ້ບັງຄັບບັນຊາ ຊຶ່ງແຕ່ງເກາະເຕັມ ພົນທະຫານມ້າຂີ່ມ້າ
ທຸກຄົນເປັນຊາຍໜຸ່ມທີ່ປາດຖະໜາ [13]ແລະເຮົາເຫັນວ່ານາງມີມົນທິນເສຍແລ້ວ ນາງທັງສອງກໍ
ເດີນທາງດຽວກັນ [14]ແຕ່ນາງຍັງຫລິ້ນຊູ້ຫລາຍຂຶ້ນ ເມື່ອນາງເຫັນຮູບຄົນຢູ່ເທິງຝາ ເປັນຮູບຄົນ
ບາບີໂລນ ຂຽນດ້ວຍສີແດງເຂັ້ມ [15]ມີສາຍຮັດແອວ ມີຜ້າຄຽນຫົວສາຍຄໍຢູ່ ທຸກຄົນເປັນເໝືອນ
ນາຍທະຫານ ເປັນຮູບຊາວ ບາບີໂລນ ຊຶ່ງແຜ່ນດິນເດີມຂອງເຂົາຄື ບາບີໂລນ [16]ເມື່ອນາງເຫັນ
ຮູບນັ້ນກໍຫລົງໄຫລເສຍ ແລະສົ່ງຜູ້ສົ່ງຂ່າວໄປຫາເຂົາທີ່ ບາບີໂລນ [17]ຊາວ ບາບີໂລນ ກໍມາຫາ
ນາງເຖິງຕຽງຮັກ ແລະເຂົາກໍເຮັດໃຫ້ນາງເປັນມົນທິນດ້ວຍລາຄະຕັນຫາຂອງເຂົາ ຫລັງຈາກທີ່
ນາງເປິເປື້ອນກັບເຂົາແລ້ວ ຈິດໃຈນາງກໍເບື່ອໜ່າຍ [18]ເມື່ອນາງໄດ້ຫລິ້ນຊູ້ຢ່າງເປີດເຜີຍ ແລະ
ໄດ້ສະແດງຄວາມເປືອຍຂອງນາງ ຈິດໃຈເຮົາກໍເບື່ອໜ່າຍນາງ ເໝືອນທີ່ຈິດໃຈເຮົາເບື່ອໜ່າຍ
ເອື້ອຍຂອງນາງ [19]ເຖິງປານນັ້ນ ນາງຍັງທະວີການຫລິ້ນຊູ້ຂອງນາງຂຶ້ນອີກ ໂດຍລະນຶກເຖິງ
ເມື່ອຄາວຍັງສາວຢູ່ ເມື່ອນາງຫລິ້ນຊູ້ຢູ່ໃນແຜ່ນດິນ ເອຢິບ [20]ນາງຫລົງໄຫລຊູ້ຂອງນາງບ່ອນນັ້ນ
ເນື້ອໜັງຂອງພວກເຂົາກໍເໝືອນຂອງລາ ແລະຂອງພວກເຂົາກໍເໝືອນຂອງມ້າ [21]ດັ່ງນີ້ແຫລະ

ເຈົ້າກໍອາໄລໃນລາຄະຕັນຫາເມື່ອເຈົ້າຍັງສາວຢູ່ ເມື່ອຄົນເອຢິບຈັບຕ້ອງເອິກຂອງເຈົ້າ ແລະຄັ້ນ
ຫົວນົມສາວຂອງເຈົ້າ”
22ເພາະສະນັ້ນ ໂອໂຮລີບາເອີຍ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ “ເບິ່ງແມ ເຮົາ
ຈະຍົວະເຍົ້າ ຄົນຮັກທີ່ຈິດໃຈເຈົ້າເບື່ອໜ່າຍແລ້ວນັ້ນໃຫ້ມາສູ້ເຈົ້າ ແລະເຮົາຈະນຳພວກເຂົາມາສູ້
ເຈົ້າຈາກທຸກດ້ານ 23ມີຄົນບາບີໂລນ ຊາວກັນດາທັງໝົດ ເປໂກດ ໂຊອາ ແລະໂກອາ ທັງ
ຄົນອັດຊີເຣຍທັງໝົດດ້ວຍ ເປັນຄົນໜຸ່ມທີ່ປາດຖະໜາ ເຈົ້າເມືອງ ຜູ້ບັງຄັບບັນຊາທັງໝົດ ເປັນ
ນາຍທະຫານ ແລະຜູ້ມີຊື່ສຽງ ທຸກຄົນຂີ່ມ້າ 24ພວກເຂົາຈະມາຕໍ່ສູ້ເຈົ້າ ມີອາວຸດ ລົດຮົບ ກວຽນ
ແລະຊົນຊາດທັງຫລາຍເປັນຈຳນວນຫລາຍ ພວກເຂົາຈະຕັ້ງຕົນຕໍ່ສູ້ເຈົ້າທຸກດ້ານ ດ້ວຍສາຍຮັດ
ໂລ່ ແລະໝວກເຫລັກ ເຮົາຈະມອບການພິພາກສາຕໍ່ໜ້າພວກເຂົາ ແລະພວກເຂົາທັງຫລາຍຈະ
ພິພາກສາເຈົ້າຕາມຫລັກການພິພາກສາຂອງພວກເຂົາເອງ 25ເຮົາຈະມຸ່ງຄວາມກະຕືລືລົ້ນຂອງ
ເຮົາຕໍ່ສູ້ເຈົ້າ ແລະພວກເຂົາຈະເຮັດກັບເຈົ້າດ້ວຍຄວາມຮ້ອນຮົນ ພວກເຂົາຈະຕັດດັງ ແລະຕັດຫູ
ຂອງເຈົ້າອອກເສຍ ຜູ້ທີ່ລອດຕາຍຈະລົ້ມລົງດ້ວຍດາບ ພວກເຂົາຈະຈັບລູກຊາຍ ແລະລູກສາວ
ຂອງເຈົ້າ ຄົນທີ່ລອດພົ້ນຕາຍຂອງເຈົ້າຈະຖືກເຜົາດ້ວຍໄຟ 26ພວກເຂົາຈະຖອດເອົາເສື້ອຂອງ
ເຈົ້າອອກ ແລະນຳເອົາເຄື່ອງຮູບປະພັນງາມໆຂອງເຈົ້າໄປເສຍ 27ເຮົາຈະໃຫ້ລາຄະຕັນຫາ
ແລະການຫລິ້ນຊູ້ຊຶ່ງເຈົ້ານຳມາຈາກແຜ່ນດິນເອຢິບສູນສິ້ນລົງ ເພື່ອເຈົ້າຈະບໍ່ໄດ້ເງີຍໜ້າຂຶ້ນເບິ່ງ
ຄົນເອຢິບ ແລະລະນຶກເຖິງພວກເຂົາອີກຕໍ່ໄປ
28ເພາະອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ ເບິ່ງແມ ເຮົາຈະມອບເຈົ້າໄວ້ໃນມືຂອງຜູ້
ທີ່ເຈົ້າກຽດຊັງ ໃນມືຂອງຄົນເຫລົ່ານັ້ນທີ່ຈິດໃຈເຈົ້າເບື່ອໜ່າຍ 29ພວກເຂົາທັງຫລາຍຈະເຮັດກັບ
ເຈົ້າດ້ວຍຄວາມກຽດຊັງ ແລະຈະປຸ້ນເອົາບັນດາຜົນແຫ່ງການງານຂອງເຈົ້າໄປ ແລະຈະຖິ້ມເຈົ້າ
ໄວ້ໃຫ້ເປືອຍກາຍ ບໍ່ມີເຄື່ອງນຸ່ງຈະຕ້ອງເປີດເຜີຍຄວາມເປືອຍກາຍ ລາຄະຕັນຫາແລະການ
ຫລິ້ນຊູ້ຂອງເຈົ້າ 30ເຮົາຈະເຮັດສິ່ງເຫລົ່ານີ້ແກ່ເຈົ້າ ເພາະເຈົ້າຫລິ້ນຊູ້ກັບປະຊາຊາດທັງຫລາຍ
ແລະການກະທຳຂອງເຈົ້າໃຫ້ສະທ້ານໄປດ້ວຍຮູບເຄົາລົບຂອງພວກເຂົາ 31ເຈົ້າດຳເນີນຕາມທາງ
ແຫ່ງເອື້ອຍຂອງເຈົ້າ ເພາະສະນັ້ນເຮົາຈະມອບຖ້ວຍຂອງນາງໃສ່ມືເຈົ້າ 32ອົງພຣະຜູ້ເປັນເຈົ້າ
ພຣະເຈົ້າກ່າວດັ່ງນີ້ວ່າ ເຈົ້າຈະຕ້ອງດື່ມຈາກຖ້ວຍຂອງເອື້ອຍເຈົ້າ ຊຶ່ງເລິກ ແລະໃຫຍ່ ເຈົ້າຈະ
ເປັນທີ່ຫົວຂວັນເຍາະເຍີ້ຍ ແລະຖືກໝິ່ນປະໝາດເພາະຖ້ວຍນັ້ນເຕັມຫລາຍ 33ເຈົ້າຈະເຕັມໄປ
ດ້ວຍຄວາມມຶນເມົາ ແລະຄວາມໂສກເສົ້າ ຖ້ວຍຂອງຊາມາເຣຍເອື້ອຍຂອງເຈົ້ານັ້ນ ເປັນຖ້ວຍ
ແຫ່ງຄວາມໜ້າສະຢ້ານກົວ 34ເຈົ້າຈະດື່ມ ແລະດື່ມຈົນໝົດ ເຈົ້າຈະກັດເສດຖ້ວຍ ແລະຈີກເອິກ
ຂອງເຈົ້າເສຍ ເພາະເຮົາໄດ້ລັ່ນຄຳເວົ້າແລ້ວ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ແຫລະ
35ເພາະສະນັ້ນ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ ເພາະເຈົ້າລືມເຮົາ ແລະໂຍນເຮົາ
ໄປໄວ້ເບື້ອງຫລັງເຈົ້າ ເພາະສະນັ້ນ ເຈົ້າຈຶ່ງຮັບໂທດຕາມລາຄະຕັນຫາ ແລະການຫລິ້ນຊູ້ຂອງ
ເຈົ້າສາ”
36ພຣະຜູ້ເປັນເຈົ້າກ່າວກັບຂ້າພະເຈົ້າອີກວ່າ “ບຸດແຫ່ງມະນຸດເອີຍ ເຈົ້າຈະພິພາກສາໂອໂຮ-
ລາ ແລະໂອໂຮລີບາບໍ ແລ້ວຈົ່ງປະກາດການກະທຳທີ່ໜ້າກຽດຊັງຂອງນາງໃຫ້ນາງຮູ້ 37ເພາະ-

ວ່ານາງໄດ້ລ່ວງປະເວນີ ແລະເລືອດຢູ່ໃນມືຂອງນາງ ນາງເຮັດການລ່ວງປະເວນີກັບຮູບເຄົາລົບ
ຂອງນາງ ແລະນາງຍັງຖວາຍລູກຊາຍຊຶ່ງນາງ ບັງເກີດໃຫ້ແກ່ເຮົານັ້ນ ໃຫ້ລຸຍໄຟເພື່ອເຜົາຜານ
ພວກເຂົາເສຍ [38]ຫລາຍກວ່ານັ້ນອີກ ນາງໄດ້ເຮັດເຊັ່ນນີ້ແກ່ເຮົາ ຄືນາງໄດ້ເຮັດໃຫ້ສະຖານທີ່ບໍ-
ລິສຸດຂອງເຮົາເປັນມົນທິນໃນມື້ດຽວກັນ ແລະເຮັດໃຫ້ສະບາໂຕຂອງເຮົາສະທ້ານ [39]ຄືຂະນະທີ່
ນາງຂ້າລູກຂອງນາງເປັນເຄື່ອງບູຊາຮູບເຄົາລົບ ໃນມື້ນັ້ນນາງກໍເຂົ້າມາໃນສະຖານທີ່ບໍລິສຸດ
ຂອງເຮົາ ແລະເຮັດໃຫ້ສະຖານທີ່ນັ້ນເປັນມົນທິນ ເບິ່ງແມ ນາງເຮັດສິ່ງເຫລົ່ານີ້ໃນວິຫານຂອງ
ເຮົາ

[40]ຫລາຍກວ່ານັ້ນອີກ ນາງຍັງໄດ້ໄປຫາຜູ້ຊາຍມາຈາກເມືອງໄກ ຄືນາງໃຊ້ຜູ້ສົ່ງຂ່າວໄປຫາ
ແລະເບິ່ງແມ ພວກເຂົາກໍມາ ນາງກໍຊຳລະຕົວຂອງນາງ ນາງທາຕາຂອງນາງ ແລະແຕ່ງກາຍ
ຂອງນາງດ້ວຍເຄື່ອງປະດັບ ເພື່ອຄົນເຫລົ່ານັ້ນ [41]ນາງນັ່ງຢູ່ເທິງຕັ່ງອັນຍິ່ງໃຫຍ່ ມີໂຕະວາງຢູ່
ຕໍ່ໜ້າ ຊຶ່ງເປັນໂຕະທີ່ເຈົ້າໄດ້ວາງເຄື່ອງຫອມ ແລະນ້ຳມັນຂອງເຮົາ [42]ສຽງຂອງປະຊາຊົນທີ່
ປ່ອຍຕົວກໍຢູ່ກັບນາງພ້ອມກັບຄົນສາມັນ ພວກເຂົານຳຄົນເສບາມາຈາກຖິ່ນແຫ້ງແລ້ງກັນດານ
ດ້ວຍ ແລະເອົາແຫວນສຸບທີ່ມືຂອງຜູ້ຍິງ ແລະສຸບມົງກຸດງາມໆເທິງຫົວຂອງນາງທັງສອງ
[43]ເຮົາຈຶ່ງກ່າວເລື່ອງນາງ ຜູ້ທີ່ເຂົາໄດ້ລ່ວງປະເວນີວ່າ ພວກເຂົາຍັງຫລິ້ນຊູ້ກັບນາງບໍ ແລະນາງ
ຍັງຫລິ້ນຊູ້ກັບເຂົາຢູ່ບໍ [44]ເພາະຊາຍເຫລົ່ານັ້ນຍັງເຂົ້າມາຫານາງ ຢ່າງດຽວກັນກັບຜູ້ຊາຍທີ່ເຂົ້າ
ຫາຍິງທີ່ເປັນໂສເພນີ ດັ່ງນັ້ນ ພວກເຂົາກໍເຂົ້າຫາໂອໂຮລາກັບໂອໂຮລີບາຊຶ່ງເປັນຍິງມີລາຄະ
ຕັນຫາ [45]ແຕ່ຄົນຊອບທຳຈະພິພາກສານາງດ້ວຍຄຳພິພາກສາອັນຄວນຕົກແກ່ຍິງຜູ້ລ່ວງປະເວນີ
ແລະດ້ວຍຄຳພິພາກສາອັນຄວນຕົກແກ່ຍິງຜູ້ເຮັດໃຫ້ຄົນເລືອດຕົກ ເພາະນາງເປັນຍິງລ່ວງປະ-
ເວນີ ແລະເພາະເລືອດຢູ່ໃນມືຂອງນາງ

[46]ເພາະອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ ຈົ່ງນຳກອງທັບມາສູ້ກັບນາງທັງສອງນີ້
ແລະເຮົາຈະມອບນາງໄວ້ແກ່ຄວາມໂກດຮ້າຍ ແລະການຖືກປຸ້ນ [47]ກອງທັບຈະເອົາກ້ອນຫີນ
ແກວ່ງໃສ່ນາງ ແລະຂ້ານາງດ້ວຍດາບ ພວກເຂົາຈະຂ້າລູກຊາຍຍິງຂອງນາງ ແລະເຜົາເຮືອນ
ທັງຫລາຍຂອງນາງດ້ວຍໄຟ [48]ດັ່ງນີ້ແຫລະ ເຮົາຈະໃຫ້ລາຄະຕັນຫາໃນແຜ່ນດິນນັ້ນສູນສິ້ນໄປ
ເພື່ອຜູ້ຍິງທັງຫລາຍຈະໄດ້ຮັບການຕັກເຕືອນ ແລະບໍ່ປະພຶດລາຄະຕັນຫາເໝືອນທີ່ເຈົ້າໄດ້ເຮັດ
ແລ້ວນັ້ນ [49]ສ່ວນລາຄະຕັນຫາຂອງເຈົ້ານັ້ນ ເຈົ້າຈະຕ້ອງຮັບໂທດແລະເຈົ້າຈະຕ້ອງຮັບໂທດ
ເລື່ອງການບູຊາຮູບເຄົາລົບຢ່າງບາບໜາຂອງເຈົ້າ ແລະເຈົ້າຈະຮູ້ວ່າເຮົາແມ່ນອົງພຣະຜູ້ເປັນ-
ເຈົ້າ”

# ບົດທີ 24

## ຄຳອຸປະມາເລື່ອງໝໍ້ນ້ຳທີ່ຕົ້ມຢູ່

[1]ເມື່ອວັນທີສິບ ເດືອນທີສິບ ປີທີເກົ້າ ພຣະທຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າອີກວ່າ
[2]“ບຸດແຫ່ງມະນຸດເອີຍ ຈົ່ງຂຽນຊື່ຂອງວັນນີ້ໄວ້ ກະສັດບາບີໂລນອ້ອມເຢຣູຊາເລັມໃນວັນນີ້ເອງ
[3]ແລະຈົ່ງກ່າວຄຳອຸປະມາແກ່ເຊື້ອສາຍທີ່ມັກກະບົດ ແລະເວົ້າກັບພວກເຂົາວ່າ ອົງພຣະຜູ້ເປັນ-

ເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ ຈົ່ງຕັ້ງໝໍ້ໄວ້ ຖອກນໍ້າໃສ່ໝໍ້ 4ໃສ່ຕ່ອນຊີ້ນລົງໄປ ເອົາຕ່ອນຊີ້ນດີໆ
ຄືຊີ້ນກົກຂາ ແລະຊີ້ນສັນຂາໜ້າ ເລືອກກະດູກດີມາໃສ່ໃຫ້ເຕັມ 5ຈົ່ງເລືອກແກະທີ່ດີທີ່ສຸດມາໂຕ
ໜຶ່ງ ໃຊ້ກະດູກເຫລົ່ານັ້ນເປັນຟືນໄວ້ ຈົ່ງຕົ້ມໃຫ້ດີ ເພື່ອຊ້ຽວກະດູກທີ່ຢູ່ໃນນັ້ນດ້ວຍ 6ເພາະສະ-
ນັ້ນ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ ວິບັດແກ່ກຸງທີ່ຊຸ່ມເລືອດ ວິບັດແກ່ໝໍ້ຂີ້ໝ້ຽງ
ແລະຂີ້ໝ້ຽງນັ້ນບໍ່ໄດ້ຫລຸດອອກມາ ຈົ່ງເອົາຊີ້ນອອກເທື່ອລະຕ່ອນ ຢ່າຈັບສະຫລາກເລີຍ
7ເພາະວ່າເລືອດທີ່ນາງເຮັດໃຫ້ຕົກນັ້ນຍັງຢູ່ທ່າມກາງນາງ ນາງວາງໄວ້ເທິງຫີນ ນາງບໍ່ໄດ້ຖອກ
ລົງດິນ ເພື່ອເອົາຝຸ່ນປົກໄວ້ 8ເຮົາໄດ້ວາງເລືອດທີ່ນາງເຮັດໃຫ້ຕົກນັ້ນໄວ້ເທິງກ້ອນຫີນ ເພື່ອບໍ່
ໃຫ້ປົກບັງເລືອດນັ້ນໄວ້ ເພື່ອເລົ້າຄວາມພິໂລດ ແລະເຮັດການແກ້ແຄ້ນ 9ເພາະສະນັ້ນ ອົງ
ພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ ວິບັດແກ່ກຸງທີ່ຊຸ່ມເລືອດ ເຮົາຈະເຮັດໃຫ້ກອງໄຟນັ້ນ
ໃຫຍ່ຂຶ້ນ 10ຈົ່ງສຸມຟືນເຂົ້າໄປ ແລະກໍ່ໄຟຂຶ້ນ ຕົ້ມຊີ້ນໃຫ້ດີ ແລ້ວປຸງແຕ່ງໃຫ້ແຊບ ແລະປ່ອຍ
ກະດູກໃຫ້ໄໝ້ 11ວາງໝໍ້ໄວ້ເທິງຖ່ານ ເພື່ອໃຫ້ທອງເຫລືອງນັ້ນຮ້ອນ ແລະໄໝ້ ໃຫ້ຂີ້ທອງ-
ເຫລືອງເປື່ອຍໃນນັ້ນ ໃຫ້ຂີ້ໝ້ຽງຂອງມັນໄໝ້ໄຟ 12ນາງເຮັດຕົວຂອງນາງເປື່ອຍດ້ວຍການຂີ້
ຕົວະຕ່າງໆ ຂີ້ໝ້ຽງທີ່ໜ້າຂອງນາງກໍບໍ່ຫລຸດອອກໄປຈາກນາງ ຂີ້ໝ້ຽງນັ້ນຈະຕ້ອງຢູ່ໃນໄຟ
13ລາຄະຕັນຫາຂອງເຈົ້າເປີເປື້ອນ ເພາະວ່າເຮົາໄດ້ຊໍາລະເຈົ້າແລ້ວ ແຕ່ເຈົ້າບໍ່ຊໍາລະຕົວ ເຈົ້າຈະ
ບໍ່ຖືກຊໍາລະຈາກຄວາມເປີເປື້ອນຂອງເຈົ້າອີກຕໍ່ໄປ ຈົນກວ່າເຮົາຈະລະບາຍຄວາມຮ້ອນຮົນຂອງ
ເຮົາອອກເໜືອເຈົ້າຈົນໝົດ

14ເຮົາແມ່ນພຣະຜູ້ເປັນເຈົ້າໄດ້ລັ່ນຄໍາເວົ້າແລ້ວ ຈະເປັນໄປຢ່າງນັ້ນ ເຮົາຈະເຮັດເຊັ່ນນັ້ນ
ເຮົາຈະບໍ່ຖອຍກັບ ເຮົາຈະບໍ່ສະຫງວນໄວ້ ແລະເຮົາຈະບໍ່ປ່ຽນໃຈ ພວກເຂົາຈະພິພາກສາເຈົ້າ
ຕາມວິທີການ ແລະການກະທໍາຂອງເຈົ້າ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ແຫລະ”

## ເມຍຂອງເອເຊກີເອນເສຍຊີວິດ

15ພຣະທໍາຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າອີກວ່າ 16“ບຸດແຫ່ງມະນຸດເອີຍ ເບິ່ງແມ
ເຮົາຈະເອົາສິ່ງທີ່ຕາຂອງເຈົ້າຢາກເຫັນໄປຈາກເຈົ້າດ້ວຍການປະຫານເສຍ ເຖິງປານນັ້ນ ເຈົ້າກໍ
ຢ່າຮ້ອງຄາງ ຫລືຮ້ອງໄຫ້ ຫລືຢ່າໃຫ້ມີນໍ້າຕາຕົກ 17ຈົ່ງອົດກັ້ນ ບໍ່ຮ້ອງຄາງ ຢ່າໄວ້ທຸກໃຫ້ຄົນທີ່
ຕາຍ ຈົ່ງຄຽນຜ້າຂອງເຈົ້າ ແລະສຸບເກີບຂອງເຈົ້າ ຢ່າປິດຮີມປາກຫລືຮັບປະທານອາຫານຂອງ
ມະນຸດ”

18ດັ່ງນັ້ນ ຂ້າພະເຈົ້າຈຶ່ງເວົ້າກັບປະຊາຊົນຕອນເຊົ້າ ແລະເມຍຂອງຂ້າພະເຈົ້າກໍສິ້ນຊີວິດ
ຕອນຄໍ່າ ຮຸ່ງເຊົ້າຂຶ້ນ ຂ້າພະເຈົ້າກໍເຮັດເໝືອນທີ່ຂ້າພະເຈົ້າຮັບພຣະບັນຊາ 19ປະຊາຊົນກໍຖາມ
ຂ້າພະເຈົ້າວ່າ “ທ່ານຈະບໍ່ບອກເຮົາທັງຫລາຍບໍວ່າ ສິ່ງນີ້ມີຄວາມໝາຍຫຍັງແກ່ເຮົາ ທ່ານຈຶ່ງ
ເຮັດເຊັ່ນນີ້”

20ແລ້ວຂ້າພະເຈົ້າກໍເວົ້າກັບພວກເຂົາວ່າ “ພຣະທໍາຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າວ່າ
21ຈົ່ງກ່າວແກ່ເຊື້ອສາຍອິສຣາເອນວ່າ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ ເບິ່ງແມ ເຮົາ
ຈະເຮັດໃຫ້ສະຖານທີ່ບໍລິສຸດຂອງເຮົາ ອັນເປັນຄວາມພາກພູມໃຈໃນອໍານາດຂອງເຈົ້າ ຄວາມ
ປາດຖະໜາແຫ່ງຕາຂອງເຈົ້າ ແລະເປັນຈິດວິນຍານທີ່ເຈົ້າຮັກ ໃຫ້ເປັນທີ່ສະທ້ານ ລູກຊາຍຍິງ

ຂອງເຈົ້າ ຊຶ່ງເຈົ້າຖີ້ມໄວ້ເບື້ອງຫລັງຈະລົ້ມລົງດ້ວຍດາບ 22ແລະເຈົ້າທັງຫລາຍຈະເຮັດເໝືອນທີ່
ເຮົາເຮັດ ເຈົ້າຈະບໍ່ປິດຣິມປາກ ຫລືຮັບປະທານອາຫານຂອງມະນຸດ 23ຜ້າຄຽນຫົວຈະຢູ່ເທິງຫົວ
ຂອງເຈົ້າ ແລະເກີບຈະຢູ່ທີ່ຕີນຂອງເຈົ້າ ເຈົ້າຈະບໍ່ໄວ້ທຸກ ຫລືຮ້ອງໄຫ້ ແຕ່ເຈົ້າຈະລົ້ມລົງຍ້ອນ
ຄວາມຊົ່ວຊ້າຂອງເຈົ້າ ແລະຈະຄ່ຳຄວນແກ່ກັນແລະກັນ 24ເອເຊກີເອນຈະເປັນເຄື່ອງໝາຍສຳ-
ຄັນແກ່ເຈົ້າທັງຫລາຍ ພວກເຂົາໄດ້ເຮັດສິ່ງໃດ ເຈົ້າຈະເຮັດຢ່າງນັ້ນທຸກຢ່າງ ເມື່ອເຫດການ
ເຫລົ່ານີ້ມາເຖິງ ເຈົ້າຈະໄດ້ຮູ້ວ່າ ເຮົາແມ່ນອົງພຣະຜູ້ເປັນເຈົ້າພຣະເຈົ້າ

25ແລະເຈົ້າ ບຸດແຫ່ງມະນຸດເອີຍ ໃນມື້ທີ່ເຮົາເອົາທີ່ກຳບັງອັນເຂັ້ມແຂງຂອງພວກເຂົາທັງ-
ຫລາຍອອກໄປ ອັນເປັນຄວາມຊື່ນບານ ແລະເປັນສະຫງ່າລາສີຂອງພວກເຂົາ ສິ່ງທີ່ຕາຂອງ
ພວກເຂົາ ແລະສິ່ງທີ່ໃຈຂອງພວກເຂົາປາດຖະໜາ ທັງລູກຊາຍ ແລະລູກສາວຂອງພວກເຂົາ
26ໃນວັນນັ້ນ ຜູ້ໜີໄພຈະມາຫາເຈົ້າ ເພື່ອຈະລາຍງານຂ່າວໃຫ້ເຈົ້າໄດ້ຍິນເອງ 27ໃນວັນນັ້ນ
ປາກຂອງເຈົ້າຈະເຊົາກືກຕໍ່ໜ້າຜູ້ໜີໄພ ເຈົ້າຈະເວົ້າ ແລະຈະ ບໍ່ເປັນປາກກືກອີກຕໍ່ໄປ ດັ່ງນັ້ນ
ເຈົ້າຈະເປັນໝາຍສຳຄັນສຳລັບພວກເຂົາ ແລະພວກເຂົາຈະຮູ້ວ່າເຮົາແມ່ນພຣະຜູ້ເປັນເຈົ້າ”

# ບົດທີ 25

## ການພິພາກສາລົງໂທດຄົນອຳໂມນ

1ພຣະທຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າອີກວ່າ 2“ບຸດແຫ່ງມະນຸດເອີຍ ຈົ່ງມຸ່ງໜ້າ
ຂອງເຈົ້າໄປຫາຄົນອຳໂມນ ແລະຈົ່ງປະກາດພຣະທຳກ່າວໂທດພວກເຂົາ 3ຈົ່ງກ່າວແກ່ຄົນອຳ-
ໂມນວ່າ ຈົ່ງຟັງພຣະທຳຂອງອົງພຣະຜູ້ເປັນເຈົ້າ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ
ເພາະເຈົ້າກ່າວວ່າ ‘ໄຊໂຍ’ ເໜືອສະຖານທີ່ບໍລິສຸດຂອງເຮົາເມື່ອຍັງເປັນມົນທິນ ແລະ ເໜືອ
ແຜ່ນດິນອິສຣາເອນເມື່ອໄດ້ຖືກເຮັດໃຫ້ຮ້າງເປົ່າ ແລະເໜືອເຊື້ອສາຍຢູດາເມື່ອຖືກກວາດໄປ
ເປັນຊະເລີຍ 4ເພາະສະນັ້ນ ເບິ່ງແມ ເຮົາຈະມອບເຈົ້າໃຫ້ແກ່ປະຊາຊົນທາງທິດຕາເວັນອອກໃຫ້
ເປັນກຳມະສິດ ພວກເຂົາຈະຕັ້ງຄ້າຍຢູ່ທ່າມກາງເຈົ້າ ແລະສ້າງບ່ອນຢູ່ຂອງພວກເຂົາຢູ່ທ່າມ-
ກາງພວກເຈົ້າ ພວກເຂົາຈະຮັບປະທານໝາກໄມ້ຂອງເຈົ້າ ແລະຈະດື່ມນ້ຳນົມຂອງເຈົ້າ 5ເຮົາ
ຈະເຮັດໃຫ້ເມືອງຣັບບາເປັນທົ່ງຫຍ້າສຳລັບອູດ ແລະເຮັດໃຫ້ແຜ່ນດິນຂອງຄົນອຳໂມນເປັນ
ບ່ອນຢູ່ສຳລັບຝູງແບ້ແກະ ແລ້ວເຈົ້າຈະຮູ້ວ່າເຮົາແມ່ນພຣະຜູ້ເປັນເຈົ້າ 6ເພາະອົງພຣະຜູ້ເປັນ-
ເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ ເພາະເຈົ້າໄດ້ຕົບມື ກະທືບຕີນ ແລະປິຕິດ້ວຍໃຈຄິດຮ້າຍຕໍ່ແຜ່ນດິນ
ອິສຣາເອນ 7ເພາະສະນັ້ນ ເບິ່ງແມ ເຮົາໄດ້ຢື່ນມືຂອງເຮົາອອກຕໍ່ສູ້ເຈົ້າ ແລະຈະມອບເຈົ້າໄວ້
ແກ່ປະຊາຊົນທັງຫລາຍໃຫ້ເປັນຂອງປຸ້ນ ເຮົາຈະຕັດເຈົ້າອອກຈາກຊົນຊາດທັງຫລາຍ ແລະຈະ
ເຮັດໃຫ້ເຈົ້າຈິບຫາຍໄປຈາກປະເທດຕ່າງໆ ເຮົາຈະທຳລາຍເຈົ້າ ແລ້ວເຈົ້າຈະຮູ້ວ່າເຮົາແມ່ນ
ພຣະຜູ້ເປັນເຈົ້າ

## ການພິພາກສາລົງໂທດຄົນໂມອາບ

8ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ ເພາະໂມອາບ ແລະເສອີກ່າວວ່າ ‘ເບິ່ງແມ
ເຊື້ອສາຍຢູດາກໍເໝືອນປະຊາຊາດອື່ນໆທັງໝົດ’ 9ເພາະສະນັ້ນ ເຮົາຈະເປີດຂ້າງໂມອາບຈົນບໍ່

ມີເມືອງເຫລືອ ຄືເມືອງຂອງພວກເຂົາຈາກເບື້ອງນັ້ນ ສະຫງ່າລາສີຂອງປະເທດນັ້ນ ຄືເມືອງ
ເບັດ-ເຢຊີໂມດ ເມືອງບາອານ-ເມໂອນ ແລະເມືອງກີຣິອາດທາຢິມ [10]ເຮົາຈະມອບເມືອງ
ເຫລົ່ານັ້ນໃຫ້ແກ່ປະຊາຊົນທາງທິດຕາເວັນອອກພ້ອມກັບ ຄົນອຳໂມນ ໃຫ້ເປັນກຳມະສິດ ເພື່ອ
ວ່າຈະບໍ່ມີໃຜນຶກເຖິງຄົນອຳໂມນອີກໃນທ່າມກາງປະຊາຊາດ [11]ແລະເຮົາຈະພິພາກສາລົງໂທດ
ໂມອາບ ແລ້ວພວກເຂົາທັງຫລາຍຈະຮູ້ວ່າເຮົາແມ່ນພຣະຜູ້ເປັນເຈົ້າ

## ການພິພາກສາລົງໂທດຄົນເອໂດມ

[12]ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ ເພາະວ່າເອໂດມໄດ້ປະພຶດເໝືອນກັບແກ້ແຄ້ນ
ຕໍ່ເຊື້ອສາຍຂອງຢູດາ ແລະໄດ້ເຮັດຄວາມຊົ່ວໃນການແກ້ແຄ້ນພວກເຂົາ [13]ເພາະສະນັ້ນ ອົງ
ພຣະຜູ້ເປັນເຈົ້າພຣະເຈົ້າຈຶ່ງກ່າວດັ່ງນີ້ວ່າ ເຮົາຈະຍື່ນມືຂອງເຮົາອອກຕໍ່ສູ້ເອໂດມ ຕັດຄົນ
ແລະສັດອອກຈາກເມືອງນັ້ນ ເຮົາຈະເຮັດໃຫ້ເມືອງນັ້ນຮ້າງເປົ່າຕັ້ງແຕ່ ເມືອງເຕມານ ຮອດ
ເມືອງເດດານ ພວກເຂົາທັງຫລາຍກໍຈະລົ້ມລົງດ້ວຍດາບ [14]ເຮົາຈະວາງການແກ້ແຄ້ນຂອງເຮົາ
ລົງເໜືອເມືອງເອໂດມດ້ວຍມືຂອງອິສຣາເອນປະຊາຊົນຂອງເຮົາ ແລະພວກເຂົາຈະເຮັດຕາມ
ຄວາມຄຽດຮ້າຍ ຄວາມພິໂລດຂອງເຮົາໃນເມືອງເອໂດມ ພວກເຂົາຈະຮູ້ເຖິງການແກ້ແຄ້ນຂອງ
ເຮົາ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ແຫລະ

## ການພິພາກສາລົງໂທດຄົນຟີລິດສະຕິນ

[15]ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ ເພາະວ່າຄົນຟີລິດສະຕິນໄດ້ເຮັດເໝືອນກັບແກ້
ແຄ້ນ ແລະເຮັດການແກ້ແຄ້ນດ້ວຍໃຈຄິດຮ້າຍໝາຍທຳລາຍ ເພາະກຽດຊັງກັນມາດົນແລ້ວ
[16]ເພາະສະນັ້ນ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າເບິ່ງແມ ເຮົາຈະຍື່ນມືຂອງເຮົາອອກ
ຕໍ່ສູ້ຄົນຟີລິດສະຕິນ ເຮົາຈະຕັດຄົນເກເຣັດອອກ ແລະທຳລາຍຄົນທີ່ເຫລືອຢູ່ຕາມຝັ່ງທະເລ
ນັ້ນເສຍ [17]ເຮົາຈະເຮັດການແກ້ແຄ້ນຍິ່ງໃຫຍ່ເທິງພວກເຂົາດ້ວຍການຕິຕຽນຢ່າງຮຸນແຮງ ແລ້ວ
ພວກເຂົາຈະຮູ້ວ່າເຮົາແມ່ນພຣະຜູ້ເປັນເຈົ້າ ເມື່ອເຮົາໄດ້ວາງການແກ້ແຄ້ນຂອງເຮົາໄວ້ເໜືອ
ພວກເຂົາ”

# ບົດທີ 26

## ການພິພາກສາລົງໂທດທີ່ຈະມາສູ່ເມືອງຕີເຣ

[1]ຢູ່ມາໃນວັນຕົ້ນເດືອນປີທີສິບເອັດ ພຣະທຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າວ່າ
[2]“ບຸດແຫ່ງມະນຸດເອີຍ ເພາະວ່າເມືອງຕີເຣໄດ້ເວົ້າກ່ຽວພັນກັບເຢຣູຊາເລັມວ່າ ‘ເອີ ປະຕູເມືອງ
ຂອງຊົນຊາດທັງຫລາຍຫັກເສຍແລ້ວ ມັນເປີດກວ້າງໄວ້ຮັບຂ້ອຍ ມັນຮ້າງເປົ່າແລ້ວ ຂ້ອຍຈະບໍ-
ລິບູນຂຶ້ນ’ [3]ເພາະສະນັ້ນ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວວ່າ ເບິ່ງແມ ເມືອງຕີເຣເອີຍ ເຮົາ
ເປັນສັດຕູກັບເຈົ້າ ແລະຈະນຳປະຊາຊາດເປັນຈຳນວນຫລາຍມາຕໍ່ສູ້ເຈົ້າ ດັ່ງທະເລເຮັດໃຫ້ຄື້ນ
ຂອງມັນຂຶ້ນມາ [4]ພວກເຂົາທັງຫລາຍຈະທຳລາຍກຳແພງເມືອງຕີເຣ ແລະພັງທະລາຍທໍ່ຄອຍ
ຂອງເມືອງນັ້ນເສຍ ເຮົາຈະຂຸດດິນຈາກເມືອງນັ້ນ ເຮັດໃຫ້ເປັນເໝືອນກັບຍອດຂອງສິລາ
[5]ເມືອງນັ້ນຈະເປັນບ່ອນສຳລັບຕາກມອງຢູ່ກາງທະເລ ເພາະເຮົາໄດ້ລັ່ນຄຳເວົ້າແລ້ວ ອົງພຣະ-

ຜູ້ເປັນເຈົ້າ ພຣະເຈົ້າ ໄດ້ກ່າວ ແລະເມືອງນັ້ນຈະເປັນເຄື່ອງປຸ້ນແກ່ບັນດາປະຊາຊາດ 6ພວກທິ-
ດາຂອງ ເມືອງນີ້ຊຶ່ງຢູ່ເທິງແຜ່ນດິນໃຫຍ່ຈະຕ້ອງຖືກຂ້າເສຍດ້ວຍດາບ ແລ້ວພວກເຂົາຈະຮູ້ວ່າ
ເຮົາແມ່ນ ພຣະຜູ້ເປັນເຈົ້າ

7ເພາະອົງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ກ່າວດັ່ງນີ້ວ່າ ເບິ່ງແມ ເຮົາຈະນຳ ເນບູກາດເນັດຊາ
ກະສັດ ບາບີໂລນ ຜູ້ເປັນຈອມກະສັດມາຍັງ ເມືອງ ຕີເຣ ຈາກທິດເໜືອ ພ້ອມທັງມ້າແລະລົດຮົບ
ກັບທະຫານມ້າ ແລະກອງທະຫານກັບຄົນຫລວງຫລາຍ 8ເພິ່ນຈະຂ້າທິດາຂອງ ເຈົ້າ ເທິງ ແຜ່ນ-
ດິນໃຫຍ່ເສຍດ້ວຍດາບ ເພິ່ນຈະກໍ່ກຳແພງອ້ອມເຈົ້າໄວ້ ແລະສ້າງທຳຄອຍຕໍ່ສູ້ກັບເຈົ້າ 9ເພິ່ນຈະ
ຕັ້ງ ເຄື່ອງທະລຸຕໍ່ສູ້ກັບກຳແພງຂອງ ເຈົ້າ ແລະ ເພິ່ນຈະ ເອົາຂວານຂອງ ເພິ່ນຟັນທຳຄອຍຂອງ ເຈົ້າ
ລົງ 10ມ້າຂອງ ເພິ່ນຫລວງຫລາຍຈົນຝຸ່ນມ້າປົກຄຸມເຈົ້າໄວ້ ກຳແພງ ເມືອງຂອງ ເຈົ້າຈະສັ່ນສະ-
ເທືອນດ້ວຍສຽງທະຫານມ້າ ກວຽນ ແລະລົດຮົບ ເພິ່ນຈະຍົກເຂົ້າປະຕູເມືອງຂອງເຈົ້າ ເໝືອນ
ກັບຄົນຍ່າງເຂົ້າເມືອງ ເວລາທີ່ເມືອງນັ້ນແຕກແລ້ວ 11ເພິ່ນຈະຢຽບຖະໜົນທັງປວງຂອງເຈົ້າດ້ວຍ
ເກີບມ້າ ເພິ່ນຈະຂ້າຊົນຊາດຂອງເຈົ້າດ້ວຍດາບ ແລະເສົາອັນແຂງແຮງຂອງເຈົ້າຈະຕົກລົງ ເຖິງ
ດິນ 12ຊັບສົມບັດຂອງເຈົ້າ ເພິ່ນຈະເອົາເປັນເຄື່ອງປຸ້ນ ແລະສິນຄ້າຂອງເຈົ້າ ເພິ່ນຈະເອົາມາ
ເປັນ ເຄື່ອງປຸ້ນ ພວກເຂົາຈະພັງກຳແພງຂອງ ເຈົ້າລົງ ແລະຈະທຳລາຍ ເຮືອນອັນພໍໃຈຂອງ ເຈົ້າ
ເສຍ ຫີນ ໄມ້ ແລະດິນຂອງເຈົ້ານັ້ນ ພວກເຂົາຈະໂຍນຖິ້ມລົງກາງນ້ຳ 13ສຽງເພງຂອງເຈົ້ານັ້ນ
ເຮົາກໍຈະໃຫ້ຢຸດ ແລະສຽງພິນຄູ່ຂອງເຈົ້າຈະບໍ່ໄດ້ຍິນອີກ 14ເຮົາຈະເຮັດໃຫ້ເຈົ້າເປັນເໝືອນກັບ
ຍອດເທິງຂອງຫີນດານ ເຈົ້າຈະເປັນສະຖານທີ່ສຳລັບຕາກມອງ ຈະບໍ່ມີໃຜສ້າງເຈົ້າຂຶ້ນໃໝ່ເລີຍ
ເພາະ ເຮົາ ແມ່ນ ພຣະຜູ້ເປັນເຈົ້າ ໄດ້ລັ່ນຄຳ ເວົ້າ ແລ້ວ ອົງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ກ່າວດັ່ງນີ້
ແຫລະ

15ອົງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ກ່າວດັ່ງນີ້ແກ່ເມືອງ ຕີເຣ ວ່າ ເກາະຕ່າງໆຈະບໍ່ສັ່ນສະເທືອນ
ດ້ວຍສຽງທີ່ເຈົ້າລົ້ມລົງ ເມື່ອຜູ້ບາດເຈັບຮ້ອງຄວນຄາງ ເມື່ອການຂ້າຟັນໄດ້ເກີດຢູ່ທ່າມກາງເຈົ້າ
ບໍ 16ແລ້ວ ເຈົ້ານາຍທັງໝົດທີ່ທະເລຈະກ້າວລົງມາຈາກບັນລັງຖອດ ເຄື່ອງນຸ່ງ ແລະປົດ ເຄື່ອງ
ແຕ່ງກາຍທີ່ປັກແສ່ວອອກ ແລະຈະ ເອົາຄວາມຢ້ານກົວມາເປັນ ເຄື່ອງນຸ່ງ ຈະປະທັບຢູ່ເທິງພື້ນ
ດິນ ສັ່ນຢູ່ທຸກເວລາ ແລະຢ້ານກົວເພາະເຈົ້າ 17ເພິ່ນເຫລົ່ານີ້ຈະເປັ່ງສຽງຮ້ອງບົດຄໍ່າຄວນເລື່ອງ
ເຈົ້າ ແລະກ່າວແກ່ເຈົ້າວ່າ ‘ໂອ ຜູ້ມີພົນລະເມືອງເປັນຊາວຕີເຣເອີຍ ເຈົ້າຖືກທຳລາຍແລ້ວ ເຈົ້າ
ເປັນເມືອງທີ່ມີຊື່ສຽງ ເຈົ້າເປັນເມືອງແຂງກ້າຢູ່ທີ່ທະເລ ທັງເຈົ້າ ແລະຊາວເມືອງຂອງເຈົ້າ ວ່າ
ເຖິງຄົນບ່ອນນັ້ນແລ້ວເຈົ້າໃຫ້ເຂົາຢ້ານກົວ 18ບັດນີ້ ເກາະທັງຫລາຍກໍຈະສັ່ນສະເທືອນໃນວັນທີ່
ເຈົ້າລົ້ມລົງ ເອີ ບັນດາເກາະທີ່ຢູ່ໃນທະເລ ກໍຈະຢ້ານກົວຍ້ອນເຈົ້າໄດ້ສູນສິ້ນໄປເສຍ’

19ເພາະອົງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ກ່າວດັ່ງນີ້ວ່າ ເມື່ອ ເຮົາຈະ ເຮັດ ໃຫ້ເຈົ້າເປັນ ເມືອງຮົກ
ຮ້າງ ເໝືອນຢ່າງເມືອງທີ່ບໍ່ມີຄົນອາໄສ ເມື່ອເຮົາຈະນຳທະເລມາຖ້ວມເຈົ້າ ແລະແມ່ນ້ຳຈະຄຸມ
ເຈົ້າໄວ້ 20ແລ້ວເຮົາຈະຊຸກເຈົ້າລົງໄປພ້ອມກັບຄົນ ເຫລົ່ານັ້ນທີ່ລົງໄປຍັງຂຸມຝັງສົບຄົນຕາຍ ໄປ
ຍັງຄົນສະໄໝເກົ່າ ເຮົາຈະເຮັດເຈົ້າໃຫ້ອາໄສຢູ່ທີ່ ເດດານ ທ່າມກາງສິ່ງທີ່ເພພັງໃນສະໄໝດຶກ
ດຳບັນ ພ້ອມກັບຜູ້ທີ່ລົງໄປຍັງຂຸມຝັງສົບຄົນຕາຍ ເພື່ອວ່າຈະບໍ່ມີໃຜອາໄສຢູ່ໃນເຈົ້າ ແລະເຮົາ

ຈະຕັ້ງສະຫງ່າລາສີໃຫ້ຢູ່ໃນແຜ່ນດິນຂອງຄົນເປັນ [21]ເຮົາຈະເຮັດໃຫ້ເຈົ້າເປັນທີ່ໜ້າຕົກໃຈຢ້ານ
ຈະບໍ່ມີເຈົ້າອີກແລ້ວ ເຖິງແມ່ນໃຜຈະມາຫາເຈົ້າ ພວກເຂົາຈະມາຫາເຈົ້າບໍ່ພົບອີກຕໍ່ໄປເປັນນິດ
ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ແຫລະ"

# ບົດທີ 27

## ບົດຄໍ່າຄວນເລື່ອງເມືອງຕີເຣ

[1]ພຣະທຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າອີກວ່າ [2]"ບຸດແຫ່ງມະນຸດເອີຍ ຈົ່ງເປັ່ງສຽງ
ບົດຮ້ອງຄໍ່າຄວນເລື່ອງເມືອງຕີເຣ [3]ແລະຈົ່ງກ່າວແກ່ເມືອງຕີເຣ ຜູ້ທີ່ຢູ່ທາງເຂົ້າສູ່ທະເລເອີຍ
ເປັນພໍ່ຄ້າແຫ່ງຊົນຊາດທັງຫລາຍ ທີ່ຢູ່ຕາມເກາະຕ່າງໆ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້
ວ່າ ເມືອງຕີເຣເອີຍ ເຈົ້າໄດ້ກ່າວວ່າ 'ຂ້ອຍນີ້ມີຄວາມງົດງາມພ້ອມພຽງ' [4]ເຂດແດນຂອງເຈົ້າຢູ່
ທີ່ກາງທະເລ ຜູ້ກໍ່ສ້າງໄດ້ເຮັດໃຫ້ຄວາມງົດງາມຂອງເຈົ້າພ້ອມພຽງ [5]ກະດານເຮືອຂອງເຈົ້າທັງ
ໝົດ ພວກເຂົາເຮັດດ້ວຍໄມ້ແປກມາຈາກເສນີ ພວກເຂົາເອົາໄມ້ແປກມາຈາກເລບານອນເຮັດ
ເປັນເສົາໃຫ້ເຈົ້າ [6]ເອົາໄມ້ກໍ່ແຫ່ງເມືອງບາຊານມາເຮັດເປັນເຮືອຂອງເຈົ້າ ໝູ່ຄົນອາຊູເຮັດແທ່ນ
ຝັງດ້ວຍງາຊ້າງຊຶ່ງມາຈາກເກາະກິດຕິມ [7]ສ່ວນໃບຂອງເຈົ້ານັ້ນ ເຮັດດ້ວຍຜ້າປ່ານປັກແຊ່ວ
ເນື້ອລະອຽດຈາກເອຢິບ ສ່ວນກັນສາດຂອງເຈົ້ານັ້ນ ເປັນສີຟ້າສີມ່ວງມາຈາກເກາະຕ່າງໆແຫ່ງ
ເມືອງເອລີຊາ [8]ຊາວເມືອງຊີໂດນ ແລະເມືອງອາວາດເປັນຄົນພາຍເຮືອຂອງເຈົ້າ ໂອ ຕີເຣ
ຄົນສະຫລຽວສະຫລາດຂອງເຈົ້າຢູ່ໃນເຈົ້າ ພວກເຂົາເປັນນາຍທ້າຍເຮືອຂອງເຈົ້າ [9]ຜູ້ໃຫຍ່ຂອງ
ເມືອງເກບານ ແລະຄົນສະຫລຽວສະຫລາດຂອງເມືອງນີ້ກໍຢູ່ໃນເຈົ້າ ເປັນຊ່າງໄມ້ປະຈຳເຮືອໃຫ້
ເຈົ້າ ບັນດາເຮືອທະເລທັງໝົດພ້ອມກັບກະລາສີກໍຢູ່ໃນເຈົ້າ ເພື່ອແລກປ່ຽນສິນຄ້າກັບເຈົ້າ
[10]ຊາວເປີເຊຍ ລູດ ແລະປຸດ ກໍຢູ່ໃນກອງທັບຂອງເຈົ້າ ພວກເຂົາທັງຫລາຍເປັນທະຫານຂອງ
ເຈົ້າ ພວກເຂົາແຂວນໂລ່ແລະໝວກເຫລັກໃນເຈົ້າ ພວກເຂົາເຮັດໃຫ້ເຈົ້າມີກຽດຕິຍົດ [11]ຊາວ
ອາວາດພ້ອມກັບທະຫານຂອງເຈົ້າຢູ່ເທິງກຳແພງໂດຍຮອບ ຊາວກາມັດຢູ່ໃນຫໍຄອຍຂອງເຈົ້າ
ພວກເຂົາແຂວນໂລ່ໄວ້ຕາມກຳແພງຂອງເຈົ້າໂດຍຮອບ ພວກເຂົາເຮັດໃຫ້ຄວາມງາມຂອງເຈົ້າ
ພ້ອມພຽງ

[12]ຕາຊິດໄປມາຄ້າຂາຍກັບເຈົ້າເພາະເຈົ້າມີຊັບພະຍາກອນຢ່າງຫລວງຫລາຍ ພວກເຂົາເອົາ
ເງິນ ເຫລັກ ກົ່ວ ແລະຊືນມາແລກປ່ຽນກັບສິນຄ້າຂອງເຈົ້າ [13]ເມືອງຢາວານ ຕູບານ ແລະ
ເມເຊັກ ຄ້າຂາຍກັບເຈົ້າ ພວກເຂົາແລກປ່ຽນຄົນ ແລະພາຊະນະທອງເຫລືອງກັບສິນຄ້າຂອງ
ເຈົ້າ [14]ເຊື້ອສາຍໂຕກາມາເອົາມ້າ ມ້າເສິກ ແລະລໍມາແລກກັບສິນຄ້າຂອງເຈົ້າ [15]ຊາວເດດານ
ເຮັດການຄ້າຂາຍກັບເຈົ້າ ເກາະຕ່າງໆເປັນຈຳນວນຫລາຍເປັນຕະຫລາດປະຈຳຂອງເຈົ້າ ພວກ
ເຂົານຳເອົາງາຊ້າງ ແລະໄມ້ໝາກເດື່ອມາເປັນຄ່າຂອງສິນຄ້າ [16]ເມືອງຊີເຣຍໄປມາຄ້າຂາຍກັບ
ເຈົ້າເພາະເຈົ້າມີສິນຄ້າອຸດົມ ພວກເຂົາເອົາແຮ່ທາດ ຜ້າສີມ່ວງ ຜ້າປັກແຊ່ວ ຜ້າປ່ານເນື້ອລະ-
ອຽດ ຫີນປະກາຮັງ ແລະທັບທິມແລກກັບສິນຄ້າຂອງເຈົ້າ [17]ຢູດາ ແລະແຜ່ນດິນອິສຣາເອນກໍ
ຄ້າຂາຍກັບເຈົ້າ ພວກເຂົາເອົາເຂົ້າເປືອກ ເມືອງມິນນິດ ແລະເມືອງປານາງ ນໍ້າເຜິ້ງ ນໍ້າມັນ

ຢາຫາ ມາແລກກັບສິນຄ້າຂອງເຈົ້າ [18]ດາມາເຊໄປມາຄ້າຂາຍກັບເຈົ້າເພາະເຈົ້າມີສິນຄ້າອຸດົມ-
ສົມບູນ ເພາະຊັບພະຍາກອນອັນຫລວງຫລາຍ ຂອງເຈົ້າ ມີເຫລົ້າອະງຸ່ນເຮນໂບນ ແລະຂົນ
ແກະຂາວ [19]ເວດານ ແລະຢາວານມາແລກກັບສິນຄ້າຂອງເຈົ້າ ພວກເຂົາເອົາເຫລັກຫລໍ່
ເຄື່ອງເທດຕ່າງໆມາແລກກັບສິນຄ້າຂອງເຈົ້າ [20]ເມືອງເດດານຄ້າຂາຍກັບເຈົ້າໃນເລື່ອງຜ້າອານ
ສຳລັບບັນດານັກຂີ່ມ້າ [21]ເມືອງອາຫລັບ ແລະເຈົ້ານາຍທັງຫລາຍຂອງເມືອງເກດາ ເປັນພໍ່ຄ້າ
ຂາປະຈຳໃນເລື່ອງລູກແກະ ແກະຜູ້ ແບ້ ພວກເຂົາໄປມາຄ້າຂາຍກັບເຈົ້າໃນເລື່ອງເຫລົ່ານີ້
[22]ພໍ່ຄ້າທັງຫລາຍຂອງເມືອງເຊບາ ແລະເມືອງຣະມາກໍຄ້າຂາຍກັບເຈົ້າ ພວກເຂົາເອົາເຄື່ອງ
ຫອມຊະນິດດີໆທັງໝົດ ເພັດພອຍທຸກຊະນິດ ແລະຄຳມາແລກສິນຄ້າກັບເຈົ້າ [23]ເມືອງຮາຣານ
ການເນ ແລະເອເດັນ ພໍ່ຄ້າທັງຫລາຍຂອງເມືອງເຊບາ ອັດຊີເຣຍ ແລະກິນມາດກໍຄ້າຂາຍ
ກັບເຈົ້າ [24]ເມືອງເຫລົ່ານີ້ເຮັດການຄ້າຂາຍກັບເຈົ້າໃນຕະຫລາດຂອງເຈົ້າ ຄືເຄື່ອງແຕ່ງກາຍຢ່າງ
ດີວິເສດ ເສື້ອສີຟ້າ ເສື້ອປັກແຊ່ວ ແລະພົມເຮັດດ້ວຍດ້າຍສີຕ່າງໆມັດໄວ້ແໜ້ນດ້ວຍດ້າຍຝັ້ນ
[25]ກຳປັ່ນທັງຫລາຍຂອງເມືອງຕາຊິດບັນທຸກສິນຄ້າຂອງເຈົ້າ ດັ່ງນັ້ນ ເຈົ້າຈຶ່ງບໍລິບູນ ແລະຮຸ່ງ-
ເຮືອງຢ່າງຫລວງຫລາຍໃນທ້ອງທະເລ [26]ຄົນພາຍເຮືອຂອງເຈົ້ານຳເຈົ້າອອກໄປບ່ອນທະເລເລິກ
ລົມຕາເວັນອອກເຮັດໃຫ້ເຮືອເຈົ້າແຕກໃນທ້ອງທະເລ [27]ຊັບສິນຂອງເຈົ້າ ເຄື່ອງຂາຍຂອງເຈົ້າ
ສິນຄ້າຂອງເຈົ້າ ລູກເຮືອຂອງເຈົ້າ ຊ່າງໄມ້ປະຈຳຂອງເຈົ້າ ຜູ້ຄ້າສິນຄ້າຂອງເຈົ້າ ນັກຮົບທັງ
ໝົດຂອງເຈົ້າ ຜູ້ຢູ່ໃນເຈົ້າພ້ອມກັບພັກພວກທັງໝົດຂອງເຈົ້າທີ່ຢູ່ທ່າມກາງເຈົ້າ ຈະຈົມລົງໃນ
ທ້ອງທະເລໃນມື້ຫລົ້ມຈົມຂອງເຈົ້າ [28]ແຜ່ນດິນຈະສັ່ນສະເທືອນເມື່ອໄດ້ຍິນສຽງຮ້ອງວຸ້ນວາຍ
ຂອງນາຍທ້າຍເຮືອຂອງເຈົ້າ [29]ບັນດາຜູ້ທີ່ຖືໄມ້ພາຍ ພວກລູກເຮືອທັງຫລາຍແຫ່ງທ້ອງທະເລ
ຈະລົງມາຈາກເຮືອຂອງພວກເຂົາ ມາຢືນຢູ່ເທິງຝັ່ງ [30]ຈະຮ້ອງຮ່ຳໄຫ້ເພາະເຈົ້າ ແລະຈະຮ້ອງໄຫ້
ຢ່າງໜັກ ພວກເຂົາຈະໂຍນຝຸ່ນຂຶ້ນຫົວຂອງຕົນ ແລະຈະກິ້ງເກືອກຢູ່ທີ່ກອງຂີ້ເທົ່າ [31]ພວກເຂົາ
ຈະແຖຜົມເພາະເຈົ້າ ແລະເອົາຜ້າກະສອບຄາດແອວໄວ້ ພວກເຂົາຈະຮ້ອງໄຫ້ ເພາະເຈົ້າດ້ວຍ
ຈິດໃຈອັນຂົມຂື່ນກັບໄວ້ທຸກຢ່າງໜັກ [32]ໃນການຮ້ອງຮ່ຳໄຫ້ນັ້ນ ພວກເຂົາຈະເປັ່ງສຽງຮ້ອງຄໍ່າ
ຄວນເພື່ອເຈົ້າ ແລະໄດ້ຮ້ອງທຸກເພື່ອເຈົ້າ ວ່າ ‘ມີເມືອງໃດບໍ ທີ່ຖືກທຳລາຍເໝືອນກັບເມືອງຕີເຣ
ໃນທ່າມກາງທະເລ [33]ເມື່ອສິນຄ້າຂອງເຈົ້າມາຈາກທະເລ ກໍເຮັດໃຫ້ຊົນຊາດເປັນຈຳນວນຫລາຍ
ພໍໃຈ ເຈົ້າໄດ້ເຮັດໃຫ້ບັນດາກະສັດແຫ່ງໂລກຮັ່ງມີ ດ້ວຍສົມບັດ ແລະສິນຄ້າອັນອຸດົມສົມບູນ
ຂອງເຈົ້າ [34]ເມື່ອເຈົ້າແຕກໄປດ້ວຍທະເລໃນບ່ອນນ້ຳເລິກ ສິນຄ້າຂອງເຈົ້າ ແລະພັກພວກທັງ-
ຫລາຍຂອງເຈົ້າຈະໄດ້ຈົມລົງພ້ອມກັບເຈົ້າ [35]ພວກຊາວເກາະຕ່າງໆທັງໝົດຈະຕົກໃຈເພາະເຈົ້າ
ກະສັດທັງຫລາຍຂອງ ເມືອງນັ້ນຈະຢ້ານກົວ ໜ້າຕາຈະຈືດຈາງ [36]ພໍ່ຄ້າທ່າມກາງຊົນຊາດທັງ-
ຫລາຍຈະເຍາະເຍີ້ຍເຈົ້າ ເຈົ້າຈະໂກດຮ້າຍ ແລະຈະບໍ່ດຳລົງຢູ່ຕໍ່ໄປອີກເປັນນິດ’”

# ບົດທີ 28

## ການຕິຕຽນເຈົ້າເມືອງຕີເຣ

[1]ພຣະທຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າອີກວ່າ [2]“ບຸດແຫ່ງມະນຸດເອີຍ ຈົ່ງກ່າວແກ່

ເຈົ້າເມືອງຕີເຣວ່າ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ ເພາະໃຈຂອງເຈົ້າອວດອົ່ງຈອງ-
ຫອງຂຶ້ນ ແລະເຈົ້າໄດ້ກ່າວວ່າ 'ຂ້ອຍເປັນພະ ຂ້ອຍນັ່ງຢູ່ໃນບ່ອນນັ່ງແຫ່ງພຣະເຈົ້າໃນທ້ອງ
ທະເລ' ແຕ່ເຈົ້າເປັນພຽງແຕ່ມະນຸດ ບໍ່ແມ່ນພຣະເຈົ້າ ເຖິງແມ່ນເຈົ້າຖືຕົວເຈົ້າວ່າສະຫລາດ
ເໝືອນພຣະເຈົ້າ [3]ເບິ່ງແມ ເຈົ້າສະຫລາດກວ່າດານີເອນ ບໍ່ມີຄວາມລັບອັນໃດທີ່ເຊື່ອງໃຫ້ພົ້ນ
ເຈົ້າໄດ້ [4]ເຈົ້າຫາຊັບສົມບັດມາສຳລັບຕົນໂດຍສະຕິປັນຍາ ແລະຄວາມເຂົ້າໃຈຂອງເຈົ້າ ໄດ້
ຮວບຮວມຄຳ ແລະເງິນມາໄວ້ໃນຄັງຂອງເຈົ້າ [5]ດ້ວຍສະຕິປັນຍາຍິ່ງໃຫຍ່ໃນການຄ້າຂອງເຈົ້າ
ເຈົ້າໄດ້ທະວີຊັບສົມບັດຂອງເຈົ້າຂຶ້ນ ແລະຈິດໃຈຂອງເຈົ້າກໍອວດອົ່ງຈອງຫອງຂຶ້ນໃນຊັບສົມບັດ
ຂອງຕົນ [6]ເພາະສະນັ້ນ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ ເພາະເຈົ້າຖືຕົວເຈົ້າວ່າສະ-
ຫລາດເໝືອນພຣະເຈົ້າ [7]ເພາະສະນັ້ນ ເບິ່ງແມ ເຮົາຈະນຳຄົນຕ່າງດ້າວມາຕໍ່ສູ້ເຈົ້າ ເປັນຊົນ
ຊາດທີ່ທາລຸນທີ່ສຸດໃນບັນດາປະຊາຊາດ ພວກເຂົາຈະຖອດດາບອອກຕໍ່ສູ້ກັບຄວາມງາມແຫ່ງ
ສະຕິປັນຍາຂອງເຈົ້າ ເຮັດໃຫ້ຄວາມງາມຂອງເຈົ້າສະເທືອນ [8]ພວກເຂົາຈະດັນເຈົ້າລົງໄປໃນຂຸມ
ຝັງສົບຄົນຕາຍ ແລະເຈົ້າຈະຕາຍເໝືອນກັບຄົນທີ່ຖືກຂ້າໃນທ້ອງທະເລ [9]ເຈົ້າຍັງຈະກ່າວອີກບໍ
ວ່າ 'ຂ້ອຍເປັນພະ' ຕໍ່ໜ້າຄົນທີ່ຂ້າເຈົ້າ ເຈົ້າເປັນພຽງແຕ່ມະນຸດ ບໍ່ແມ່ນພະ ຢູ່ໃນມືຂອງຄົນທີ່
ຂ້າເຈົ້າ [10]ເຈົ້າຈະຕາຍເໝືອນຄົນທີ່ບໍ່ໄດ້ເຂົ້າພິທີຕັດຕາຍ ໂດຍມືຂອງຄົນຕ່າງດ້າວ ເພາະເຮົາ
ໄດ້ລັ່ນຄຳເວົ້າແລ້ວ ອົງພຣະຜູ້ເປັນເຈົ້າພຣະເຈົ້າໄດ້ກ່າວ"

[11]ພຣະທຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າວ່າ [12]"ບຸດແຫ່ງມະນຸດເອີຍ ຈົ່ງເປັ່ງສຽງ
ຮ້ອງຄໍ່າຄວນເພື່ອກະສັດເມືອງຕີເຣ ແລະຈົ່ງກ່າວແກ່ເພິ່ນ ວ່າ ອົງພຣະຜູ້ເປັນເຈົ້າພຣະເຈົ້າ
ກ່າວດັ່ງນີ້ວ່າ ເຈົ້າເປັນຕາປະທັບແຫ່ງຄວາມສົມບູນແບບ ເຕັມດ້ວຍສະຕິປັນຍາ ແລະມີຄວາມ
ງາມແທ້ໆ [13]ເຈົ້າເຄີຍຢູ່ໃນເອເດັນ ສວນຂອງພຣະເຈົ້າ ເພັດພອຍທຸກຢ່າງເປັນເສື້ອຂອງເຈົ້າ
ຄືທັບທິມ ເພັດນິນຈິນດາ ເພັດ ພອຍຂຽວ ພອຍສີນ້ຳເຂົ້າ ແລະຢົກ ນິລະກົດ ພອຍສີແດງ
ເຂັ້ມ ແລະຄຳ ຄວາມຊ່ຽວຊານແຫ່ງກອງ ແລະປີຂອງເຈົ້າໄດ້ຈັດຕຽມໄວ້ໃນມື້ທີ່ສ້າງເຈົ້າຂຶ້ນມາ
[14]ເຈົ້າເປັນເຄຣຸບຜູ້ພິທັກທີ່ໄດ້ເຈີມຕັ້ງໄວ້ ເຮົາໄດ້ຕັ້ງເຈົ້າໄວ້ ເຈົ້າເຄີຍຢູ່ເທິງພູເຂົາບໍລິສຸດແຫ່ງ
ພຣະເຈົ້າ ແລະເຈົ້າເຄີຍຍ່າງຢູ່ທ່າມກາງສີລາໄຟ [15]ເຈົ້າກໍປາດສະຈາກຕຳໜິໃນວິທີການທັງ-
ຫລາຍຂອງເຈົ້າ ຕັ້ງແຕ່ມື້ທີ່ເຈົ້າໄດ້ຖືກສ້າງຂຶ້ນມາ ຈົນພົບຄວາມຊົ່ວຊ້າໃນຕົວເຈົ້າ [16]ໃນຄວາມ
ອຸດົມສົມບູນແຫ່ງການຄ້າຂອງເຈົ້ານັ້ນ ເຈົ້າກໍເຕັມໄປດ້ວຍການທາລຸນ ເຈົ້າເຮັດບາບ ດັ່ງນັ້ນ
ເຄຣຸບ ຜູ້ພິທັກເອີຍ ເຮົາຈະຂັບໄລ່ເຈົ້າອອກໄປຈາກພູເຂົາແຫ່ງພຣະເຈົ້າເໝືອນກັບສິ່ງທີ່ເປິ-
ເປື້ອນ ແລະຈະກຳຈັດເຈົ້າເສຍຈາກທ່າມກາງສີລາໄຟ [17]ຈິດໃຈຂອງເຈົ້າອວດອ້າງຈອງຫອງຂຶ້ນ
ເພາະຄວາມງາມຂອງເຈົ້າ ເຈົ້າເຮັດໃຫ້ສະຕິປັນຍາຂອງເຈົ້າເສື່ອມໂຊມລົງ ເພາະເຫັນແກ່ຄວາມ
ງາມຂອງເຈົ້າ ເຮົາຈະໂຍນເຈົ້າລົງດິນ ເຮົາຈະຕີເຈົ້າຕໍ່ໜ້າກະສັດທັງຫລາຍ ເພື່ອຕາຂອງເພິ່ນ
ທັງຫລາຍເຫລົ່ານັ້ນຈະເຫັນເຈົ້າ [18]ເຈົ້າເຮັດໃຫ້ສະຖານທີ່ບໍລິສຸດຂອງເຈົ້າເປັນມົນທິນ ໂດຍ
ຄວາມຊົ່ວຊ້າທັງຫລາຍຂອງເຈົ້າໃນການຄ້າອັນຊົ່ວຊ້າຂອງເຈົ້າ ເຫດສະນັ້ນ ເຮົາຈະນຳໄຟລົງ
ມາຈາກໝູ່ພວກເຈົ້າ ໄຟຈະເຜົາຜານເຈົ້າ ເຮົາຈະເຮັດໃຫ້ເຈົ້າກັບເປັນຂີ້ເທົ່າໄປຕາມພື້ນໂລກ ຕໍ່-
ໜ້າຕໍ່ຕາຂອງຄົນທັງປວງທີ່ເຫັນເຈົ້າ [19]ບັນດາຜູ້ທີ່ຮູ້ຈັກເຈົ້າທ່າມກາງຊົນຊາດທັງຫລາຍ ພວກ

ເຂົາຈະຕົກໃຈເພາະເຈົ້າ ເຈົ້າຈະສິ້ນສຸດລົງຢ່າງໜ້າຢ້ານກົວ ແລະຈະບໍ່ດຳລົງຢູ່ອີກຕໍ່ໄປເປັນ-
ນິດ”

## ການພິພາກສາລົງໂທດເມືອງຊີໂດນ

[20]ພຣະທຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າອີກວ່າ [21]“ບຸດແຫ່ງມະນຸດເອີຍ ຈົ່ງມຸ່ງໜ້າ
ຕໍ່ສູ້ຊີໂດນ ແລະປະກາດພຣະທຳກ່າວໂທດເມືອງນັ້ນ [22]ແລະກ່າວວ່າ ອົງພຣະຜູ້ເປັນເຈົ້າ
ພຣະເຈົ້າກ່າວດັ່ງນີ້ວ່າ ເບິ່ງແມ ຊີໂດນເອີຍ ເຮົາເປັນສັດຕູກັບເຈົ້າ ເຮົາຈະສະແດງສະຫງ່າ
ລາສີຂອງເຮົາທ່າມກາງເຈົ້າ ແລະພວກເຂົາທັງຫລາຍຈະຮູ້ວ່າເຮົາແມ່ນພຣະຜູ້ເປັນເຈົ້າ ເມື່ອ
ເຮົາເຮັດການພິພາກສາລົງໂທດໃນເມືອງນັ້ນ ແລະສະແດງຄວາມບໍລິສຸດຂອງເຮົາໃນເມືອງນັ້ນ
[23]ເພາະເຮົາຈະສົ່ງພະຍາດລະບາດເຂົ້າມາໃນເມືອງນັ້ນ ແລະສົ່ງເລືອດເຂົ້າມາໃນຖະໜົນຂອງ
ເມືອງນັ້ນ ຄົນທີ່ຖືກບາດເຈັບຈະລົ້ມລົງທ່າມກາງເມືອງນັ້ນ ລົ້ມລົງດ້ວຍດາບທີ່ຢູ່ຮອບເມືອງນັ້ນ
ທຸກດ້ານ ແລ້ວພວກເຂົາທັງຫລາຍຈະຮູ້ວ່າເຮົາແມ່ນພຣະຜູ້ເປັນເຈົ້າ

[24]ສ່ວນເຊື້ອສາຍອິສຣາເອນນັ້ນ ຈະບໍ່ມີໜາມມາແທງ ຫລືມີໜາມໃຫຍ່ອີກ ທ່າມກາງຄົນທັງ
ປວງ ຊຶ່ງໄດ້ເຄີຍເຮັດແກ່ພວກເຂົາດ້ວຍຄວາມໝິ່ນປະໝາດ ແລ້ວພວກເຂົາຈະຮູ້ວ່າເຮົາແມ່ນອົງ
ພຣະຜູ້ເປັນເຈົ້າ

## ພຣະເຈົ້າຈະໄດ້ຮວບຮວມເຊື້ອສາຍອິສຣາເອນ

[25]ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ ເຮົາຈະຮວບຮວມເຊື້ອສາຍອິສຣາເອນຈາກຊົນ
ຊາດທັງຫລາຍ ຊຶ່ງພວກເຂົາໄດ້ກະຈັດກະຈາຍໄປຢູ່ນັ້ນ ແລະເຮົາຈະສະແດງຄວາມບໍລິສຸດ
ຂອງເຮົາທ່າມກາງພວກເຂົາຕໍ່ໜ້າຕໍ່ຕາປະຊາຊາດທັງຫລາຍ ແລ້ວພວກເຂົາຈະໄດ້ອາໄສຢູ່ໃນ
ແຜ່ນດິນຂອງເຂົາເອງ ຊຶ່ງເຮົາໄດ້ມອບໃຫ້ແກ່ຢາໂຄບ ຜູ້ຮັບໃຊ້ຂອງເຮົາ [26]ພວກເຂົາຈະອາໄສ
ຢູ່ໃນທີ່ນັ້ນຢ່າງປອດໄພ ພວກເຂົາຈະສ້າງບ້ານເຮືອນ ແລະປູກສວນອະງຸ່ນ ເມື່ອເຮົາເຮັດການ
ພິພາກສາລົງໂທດຄົນທັງຫລາຍທີ່ຢູ່ຮອບພວກເຂົາຜູ້ໄດ້ເຮັດຕໍ່ພວກເຂົາດ້ວຍຄວາມໝິ່ນປະໝາດ
ນັ້ນ ພວກເຂົາຈະອາໄສຢູ່ດ້ວຍຄວາມໝັ້ນໃຈ ແລ້ວພວກເຂົາທັງຫລາຍຈະຮູ້ວ່າ ເຮົາແມ່ນພຣະ-
ຜູ້ເປັນເຈົ້າພຣະເຈົ້າຂອງພວກເຂົາ”

# ບົດທີ 29

## ໄດ້ສັນຍາວ່າຈະພິພາກສາລົງໂທດເອຢິບ

[1]ເມື່ອວັນທີສິບສອງ ເດືອນສິບໃນປີທີສິບ ພຣະທຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າ
ວ່າ [2]“ບຸດແຫ່ງມະນຸດເອີຍ ຈົ່ງມຸ່ງໜ້າຂອງເຈົ້າຕໍ່ສູ້ຟາຣາໂອກະສັດແຫ່ງເອຢິບ ປະກາດພຣະ-
ທຳກ່າວໂທດກະສັດ ແລະເອຢິບທັງໝົດ [3]ເວົ້າໄປສາ ແລະກ່າວວ່າ ອົງພຣະຜູ້ເປັນເຈົ້າພຣະ-
ເຈົ້າກ່າວດັ່ງນີ້ວ່າ ເບິ່ງແມ ເຮົາເປັນສັດຕູກັບເຈົ້າ ຟາຣາໂອກະສັດແຫ່ງເອຢິບ ຜູ້ເປັນແຂ້
ນອນຢູ່ກາງແມ່ນ້ຳທັງຫລາຍຂອງມັນ ຜູ້ກ່າວວ່າ ‘ແມ່ນ້ຳຂອງຂ້ອຍກໍເປັນຂອງຂ້ອຍ ຂ້ອຍສ້າງ
ມັນຂຶ້ນ’ [4]ເຮົາຈະເອົາເບັດກ່ຽວຄາງຂອງເຈົ້າ ແລະຈະເຮັດໃຫ້ປາ ໃນແມ່ນ້ຳທັງຫລາຍຂອງເຈົ້າ
ຕິດກັບເກັດຂອງເຈົ້າ ແລະເຮົາຈະລາກເຈົ້າຂຶ້ນມາຈາກກາງແມ່ນ້ຳທັງຫລາຍຂອງເຈົ້າ ແລະ

ບັນດາປາໃນແມ່ນ້ຳທັງຫລາຍຂອງເຈົ້າຈະຕິດຢູ່ກັບເກັດຂອງເຈົ້າ [5]ເຮົາຈະໂຍນເຈົ້າເຂົ້າໄປໃນ
ຖິ່ນແຫ້ງແລ້ງກັນດານທັງຕົວເຈົ້າ ແລະປາໃນແມ່ນ້ຳທັງຫລາຍຂອງເຈົ້າ ເຈົ້າຈະຕົກລົງພື້ນດິນ
ຈະບໍ່ມີໃຜຮວບຮວມ ແລະຝັງເຈົ້າໄວ້ ເຮົາໄດ້ມອບເຈົ້າໄວ້ໃຫ້ເປັນອາຫານຂອງສັດປ່າ ແລະ
ຂອງນົກໃນອາກາດ [6]ແລ້ວຄົນທີ່ຢູ່ໃນເອຢິບທັງໝົດຈະຮູ້ວ່າ ເຮົາແມ່ນພຣະຜູ້ເປັນເຈົ້າ ເພາະ
ເຈົ້າເປັນໄມ້ເທົ້າຂອງເຊື້ອສາຍອິສຣາເອນ [7]ເມື່ອພວກເຂົາເອົາມືຈັບເຈົ້າ ເຈົ້າກໍຫັກ ແລະບາດ
ບ່າຂອງພວກເຂົາທຸກຄົນ ເມື່ອພວກເຂົາເພິ່ງພາເຈົ້າ ເຈົ້າກໍລົ້ມລົງ ແລະເຮັດໃຫ້ບັ້ນແອວຂອງ
ພວກເຂົາສັ່ນໝົດ

[8]ດັ່ງນັ້ນ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ ເບິ່ງແມ ເຮົາຈະນຳດາບມາເໜືອເຈົ້າ
ຕັດມະນຸດ ແລະສັດໃຫ້ຂາດຈາກເຈົ້າ [9]ແຜ່ນດິນເອຢິບຈະເປັນບ່ອນຮ້າງເປົ່າ ແລະບ່ອນວ່າງ
ເປົ່າ ແລ້ວພວກເຂົາທັງຫລາຍຈະຮູ້ວ່າ ເຮົາແມ່ນພຣະຜູ້ເປັນເຈົ້າ ເພາະກະສັດໄດ້ກ່າວວ່າ
'ແມ່ນ້ຳເປັນຂອງຂ້ອຍ ແລະຂ້ອຍສ້າງມັນ' [10]ເຫດສະນັ້ນ ເບິ່ງແມ ເຮົາເປັນສັດຕູກັບເຈົ້າ ແລະ
ກັບແມ່ນ້ຳທັງຫລາຍຂອງເຈົ້າ ເຮົາຈະເຮັດໃຫ້ແຜ່ນດິນເອຢິບວ່າງເປົ່າ ແລະຮ້າງເປົ່າ ຕັ້ງແຕ່
ມິກໂດນໄປຮອດສີເອເນ ໄກໄປຈົນຮອດເຂດແດນເອທີໂອເປຍ [11]ຈະບໍ່ມີຕີນມະນຸດຂ້າມ
ແຜ່ນດິນນັ້ນ ແລະຈະບໍ່ມີຕີນສັດຂ້າມແຜ່ນດິນນັ້ນ ຈະບໍ່ມີໃຜອາໄສຢູ່ເຖິງສີ່ສິບປີ [12]ເຮົາຈະເຮັດ
ໃຫ້ແຜ່ນດິນເອຢິບເປັນບ່ອນຮ້າງເປົ່າທ່າມກາງປະເທດຮ້າງເປົ່າທັງຫລາຍ ແລະຫົວເມືອງຂອງ
ມັນຈະວ່າງເປົ່າຢູ່ສີ່ສິບປີທ່າມກາງຫົວເມືອງທີ່ວ່າງເປົ່າທັງຫລາຍ ເຮົາຈະໃຫ້ຄົນເອຢິບກະຈັດ-
ກະຈາຍໄປທ່າມກາງປະຊາຊາດ ແລະຈະກະຈາຍພວກເຂົາໄປຕາມປະເທດຕ່າງໆ

[13]ເພາະອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ ເມື່ອຄົບສີ່ສິບປີແລ້ວ ເຮົາຈະຮວບຮວມ
ຄົນເອຢິບຈາກທ່າມກາງຊົນຊາດທັງຫລາຍ ຊຶ່ງພວກເຂົາກະຈັດກະຈາຍໄປຢູ່ນັ້ນ [14]ແລະເຮົາ
ຈະໃຫ້ເອຢິບກັບສູ່ສະພາບເດີມ ແລະນຳພວກເຂົາກັບມາຍັງແຜ່ນດິນປັດໂຣດ ຊຶ່ງເປັນແຜ່ນ-
ດິນດັ້ງເດີມຂອງພວກເຂົາ ພວກເຂົາທັງຫລາຍຈະເປັນລາຊະອານາຈັກຕ່ຳຕ້ອຍໃນບ່ອນນັ້ນ
[15]ຈະເປັນລາຊະອານາຈັກທີ່ຕ່ຳຕ້ອຍທີ່ສຸດໃນບັນດາລາຊະອານາຈັກທັງຫລາຍ ແລະຈະບໍ່ເຄີຍ
ຍົກຕົນຂຶ້ນເໜືອປະຊາຊາດທັງຫລາຍອີກເລີຍ ເພາະເຮົາຈະເຮັດໃຫ້ພວກເຂົາເປັນລາຊະອານາ-
ຈັກນ້ອຍຈົນບໍ່ສາມາດຈະປົກຄອງປະຊາຊາດອື່ນໄດ້ [16]ແລະຈະບໍ່ເປັນບ່ອນທີ່ໄວ້ວາງໃຈຂອງ
ເຊື້ອສາຍອິສຣາເອນອີກ ອັນເຮັດໃຫ້ສຳນຶກເຖິງຄວາມຊົ່ວຊ້າຂອງພວກເຂົາເມື່ອຫັນໄປເຊື່ອ
ໝັ້ນເອຢິບນັ້ນ ແລ້ວພວກເຂົາຈະຮູ້ວ່າເຮົາແມ່ນອົງພຣະຜູ້ເປັນເຈົ້າ"

[17]ຕໍ່ມາເມື່ອວັນທີໜຶ່ງ ເດືອນທີໜຶ່ງ ໃນປີທີຊາວເຈັດ ພຣະທຳຂອງພຣະຜູ້ເປັນເຈົ້າມາເຖິງ
ຂ້າພະເຈົ້າວ່າ [18]"ບຸດແຫ່ງມະນຸດເອີຍ ເນບູກາດເນັດຊາ ກະສັດແຫ່ງບາບີໂລນໄດ້ໃຫ້ກອງທັບ
ມາສູ້ຮົບກັບ ເມືອງຕີເຣຢ່າງໜັກຈົນຫົວທຸກຫົວລ້ານ ແລະບ່າທຸກບ່າກໍເຫລື້ນ ເຖິງປານນັ້ນເພິ່ນ
ເອງ ຫລືກອງທັບຂອງເພິ່ນກໍບໍ່ໄດ້ຫຍັງໄປຈາກຕີເຣອັນເປັນຄ່າແຮງ ຊຶ່ງເພິ່ນໄດ້ເຮັດຕໍ່ເມືອງ
ນັ້ນ [19]ເຫດສະນັ້ນ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ ເບິ່ງແມ ເຮົາຈະມອບແຜ່ນດິນ
ເອຢິບໄວ້ກັບເນບູກາດເນັດຊາກະສັດແຫ່ງບາບີໂລນ ເພິ່ນຈະນຳຝູງຄົນຂອງພວກເຂົາ ແລະ
ປຸ້ນເຄື່ອງຂອງໄປ ທັງປຸ້ນເອົາໄປເປັນຄ່າຈ້າງກອງທັບຂອງເພິ່ນ [20]ອົງພຣະຜູ້ເປັນເຈົ້າພຣະ-

ເຈົ້າກ່າວວ່າ ເຮົາໄດ້ມອບແຜ່ນດິນເອຢິບໃຫ້ໄວ້ແກ່ເພິ່ນເພື່ອເປັນຄ່າ ແຮງງານຊຶ່ງພວກເຂົາ
ທັງຫລາຍໄດ້ເຮັດເພື່ອເຮົາ [21]ໃນມື້ນັ້ນ ເຮົາຈະເຮັດໃຫ້ມີເຂົາປົ່ງຂຶ້ນມາໃນເຊື້ອສາຍອິສຣາເອນ
ແລະເຮົາຈະໃຫ້ເຈົ້າອ້າປາກເວົ້າໃນທ່າມກາງພວກເຂົາທັງຫລາຍ ແລ້ວພວກເຂົາຈະຮູ້ວ່າເຮົາ
ແມ່ນພຣະຜູ້ເປັນເຈົ້າ"

# ບົດທີ 30

## ວັນແຫ່ງພຣະຜູ້ເປັນເຈົ້າ ພຣະເຈົ້າໄດ້ລົງໂທດເອຢິບ

[1]ພຣະທຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າອີກວ່າ [2]"ບຸດແຫ່ງມະນຸດເອີຍ ຈົ່ງປະກາດ
ພຣະທຳ ແລະກ່າວວ່າ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ ຈົ່ງຮ້ອງໄຫ້ຮ່ຳໄຮສາວ່າ
'ອະນິດຈັງນໍ ມື້ນັ້ນ' [3]ເພາະມື້ນັ້ນໃກ້ເຂົ້າມາແລ້ວ ວັນແຫ່ງພຣະຜູ້ເປັນເຈົ້າໃກ້ເຂົ້າມາຈະເປັນມື້
ທີ່ມີເມກ ເປັນເວລາທີ່ກຳນົດຂອງປະຊາຊາດ [4]ດາບເຫລັ້ມໜຶ່ງຈະມາເໜືອເອຢິບ ແລະຄວາມ
ແສນລະທົມຈະຢູ່ໃນເອທີໂອເປຍ ຄົນທີ່ຖືກຂ້າຈະລົ້ມລົງໃນເອຢິບ ແລະພວກເຂົາຈະນຳຝູງ
ຄົນຂອງເມືອງນັ້ນໄປ ແລະຮາກຖານຂອງເມືອງນັ້ນກໍຈະຖືກທຳລາຍລົງ

[5]ເອທີໂອເປຍ ປຸດ ລູດ ແລະຄົນຕ່າງດ້າວທັງປວງ ແລະລີເບຍ ແລະປະຊາຊົນແຫ່ງ
ແຜ່ນດິນນັ້ນທີ່ຢູ່ໃນຂົງເຂດດັ່ງກ່າວ ກໍຈະລົ້ມລົງພ້ອມກັບພວກເຂົາດ້ວຍດາບ

[6] ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ຄົນເຫລົ່ານັ້ນທີ່ສະໜັບສະໜູນເອຢິບຈະຫລົ້ມຈົມ
ແລະອານຸພາບອັນອວດອ້າງຈອງຫອງຂອງມັນຈະລົງມາ
ຈາກມິກໂດນໄປເຖິງສີເອເນພວກເຂົາຈະລົ້ມລົງພາຍໃນປະເທດນັ້ນດ້ວຍດາບ
ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ແຫລະ
[7] ແລະມັນຈະຮ້າງເປົ່າຢູ່ທ່າມກາງປະເທດທີ່ຮ້າງເປົ່າທັງຫລາຍ
ແລະຫົວເມືອງຂອງມັນຈະຢູ່ທ່າມກາງຫົວເມືອງທີ່ຖືກຖິ້ມໃຫ້ຮ້າງເປົ່າ
[8] ພວກເຂົາຈະຮູ້ວ່າເຮົາແມ່ນພຣະຜູ້ເປັນເຈົ້າ ເມື່ອເຮົາວາງແປວໄຟທີ່ເອຢິບ
ແລະຜູ້ຊ່ວຍທັງໝົດຂອງມັນກໍທະລາຍແລ້ວ

[9]ແລະໃນມື້ນັ້ນຜູ້ສົ່ງຂ່າວຈະລົງເຮືອໄປຈາກເຮົາ ເພື່ອຈະເຮັດໃຫ້ຄົນເອທີໂອເປຍທີ່ຢ້ານກົວຢູ່
ນັ້ນໂກດຮ້າຍ ຄວາມແສນລະທົມຈະມາເຖິງພວກເຂົາເຫລົ່ານັ້ນ ເໝືອນໃນວັນກຳນົດຂອງເອ-
ຢິບ ເພາະເບິ່ງແມ ວັນນັ້ນມາເຖິງແທ້ໆ

[10]ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ
ເຮົາຈະເຮັດໃຫ້ຄົນທັງຫລາຍຂອງເອຢິບສິ້ນສຸດລົງ
ດ້ວຍມືຂອງເນບູກາດເນັດຊາກະສັດແຫ່ງບາບີໂລນ
[11] ຕົວເພິ່ນພ້ອມກັບຊົນຊາດຂອງເພິ່ນຄືຊົນຊາດທີ່ທາລຸນທີ່ສຸດໃນບັນດາປະຊາຊາດ
ຈະຖືກນຳເຂົ້າມາເພື່ອທຳລາຍແຜ່ນດິນນັ້ນ
ແລະພວກເຂົາຈະຖອດດາບອອກຕໍ່ສູ້ເອຢິບ
ເຮັດໃຫ້ແຜ່ນດິນເຕັມໄປດ້ວຍຄົນທີ່ຖືກຂ້າ

12 ເຮົາຈະເຮັດໃຫ້ແມ່ນ້ຳທັງຫລາຍແຫ້ງລົງ
ເຮົາຈະຂາຍແຜ່ນດິນນັ້ນໄວ້ໃນມືຂອງຄົນຊົ່ວ ເຮົາຈະເຮັດໃຫ້ແຜ່ນດິນ
ແລະສາລະພັດທີ່ຢູ່ເທິງແຜ່ນດິນນັ້ນຮ້າງເປົ່າໂດຍມືຂອງຄົນຕ່າງດ້າວ
ເຮົາແມ່ນ ພຣະຜູ້ເປັນເຈົ້າ ໄດ້ລັ່ນຄຳເວົ້າແລ້ວ
13 ອົງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ກ່າວດັ່ງນີ້ວ່າ ເຮົາຈະທຳລາຍຮູບເຄົາລົບ
ຈະເຮັດໃຫ້ບັນດາຮູບເຄົາລົບໃນເມືອງ ເມັມຟິດ ສິ້ນສຸດລົງ
ແລະຈະບໍ່ມີເຈົ້ານາຍຈາກແຜ່ນດິນ ເອຢິບ ອີກ
ດັ່ງນັ້ນເຮົາຈະໃສ່ຄວາມຢຳເກງໄວ້ໃນແຜ່ນດິນ ເອຢິບ
14 ເຮົາຈະເຮັດປັດໂຣດ ໃຫ້ເປັນບ່ອນຮ້າງ ແລະຈະວາງແປວໄຟທີ່ ໂຊອານ
ທັງຈະເຮັດການພິພາກສາລົງໂທດເມືອງເອກຂອງເທເບັດ
15 ເຮົາຈະຖອກຄວາມພິໂລດຂອງເຮົາລົງເທິງເມືອງ ເປລູສຽມ
ບ່ອນກຳບັງອັນເຂັ້ມແຂງຂອງ ເອຢິບ
ແລະຈະຕັດເຫລົ່າຝູງຄົນອອກຈາກເມືອງເທເບັດ
16 ເຮົາຈະຈູດໄຟໃນ ເອຢິບ ເມືອງ ເປລູສຽມ ຈະຢູ່ໃນຄວາມທຸກທໍລະມານ
ເມືອງເທເບັດຈະແຕກ ແລະເມືອງ ເມັມຟິດ ຈະມີຄູ່ຕໍ່ສູ້ໃນເວລາກາງເວັນ
17 ຊາຍໜຸ່ມຂອງເມືອງ ອາເວນ ແລະເມືອງ ປີເບເສດ ຈະລົ້ມລົງດ້ວຍດາບ
ແລະເມືອງນັ້ນເອງຈະຖືກກວາດໄປເປັນຊະເລີຍ
18 ທີ່ເມືອງ ຕະປັນເຂດ ກາງເວັນຈະມືດ ເມື່ອເຮົາທຳລາຍແອກຂອງ ເອຢິບ
ແລະອານຸພາບອັນອວດອົ່ງຈອງຫອງຂອງເມືອງນັ້ນຈະສິ້ນສຸດລົງ
ຈະມີເມກມາຄຸມເມືອງນັ້ນໄວ້ ແລະເຫລົ່າທິດາຂອງເມືອງນັ້ນຈະຕົກໄປເປັນຊະເລີຍ
19 ເຮົາຈະເຮັດການພິພາກສາລົງໂທດ ເອຢິບ ດັ່ງນີ້ແຫລະ
ແລ້ວພວກເຂົາຈະຮູ້ວ່າເຮົາແມ່ນ ພຣະຜູ້ເປັນເຈົ້າ”

## ພຣະເຈົ້າໄດ້ຊ່ວຍບາບີໂລນ ແລະສູ້ກັບເອຢິບ

20 ຕໍ່ມາເມື່ອວັນທີເຈັດ ເດືອນທີໜຶ່ງ ໃນປີທີສິບເອັດ ພຣະທຳຂອງ ພຣະຜູ້ເປັນເຈົ້າ ມາເຖິງ
ຂ້າພະເຈົ້າວ່າ 21 “ບຸດແຫ່ງມະນຸດເອີຍ ເຮົາໄດ້ເຮັດໃຫ້ແຂນຂອງ ຟາຣາໂອ ກະສັດແຫ່ງ ເອຢິບ
ຫັກ ແລະເບິ່ງແມ ບໍ່ມີຜູ້ໃດພັນແຂນໃຫ້ ບໍ່ມີຜູ້ໃດເອົາຜ້າມາພັນແຂນ ເພື່ອຈະຮັກສາໃຫ້ຫາຍ
ເພື່ອໃຫ້ເຂັ້ມແຂງທີ່ຈະຖືດາບໄດ້ອີກ 22 ເຫດສະນັ້ນ ອົງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ກ່າວດັ່ງນີ້ວ່າ
ເບິ່ງແມ ເຮົາເປັນສັດຕູກັບ ຟາຣາໂອ ກະສັດແຫ່ງ ເອຢິບ ເຮົາຈະຫັກແຂນຂອງລາວ ທັງແຂນທີ່
ຍັງແຂງແຮງ ແລະແຂນທີ່ຫັກແລ້ວນັ້ນ ເຮົາຈະເຮັດໃຫ້ດາບຫລຸດຈາກມືຂອງລາວ 23 ເຮົາຈະໃຫ້
ຄົນ ເອຢິບ ກະຈັດກະຈາຍໄປຢູ່ທ່າມກາງປະຊາຊາດ ແລະຈະກະຈາຍພວກເຂົາໄປຕາມປະເທດ
ຕ່າງໆ 24 ເຮົາຈະເສີມກຳລັງແຂນຂອງກະສັດແຫ່ງ ບາບີໂລນ ແລະເອົາດາບຂອງເຮົາໃສ່ມືໃຫ້
ແຕ່ເຮົາຈະຫັກແຂນຂອງ ຟາຣາໂອ ແລະລາວຈະຮ້ອງຄາງຕໍ່ໜ້າເພິ່ນເໝືອນດັ່ງຄົນຖືກບາດເຈັບ
ໃກ້ຈະຕາຍ 25 ເຮົາຈະເສີມກຳລັງແຂນຂອງກະສັດແຫ່ງ ບາບີໂລນ ແຕ່ແຂນຂອງ ຟາຣາໂອ ຈະ

ຕົກ ແລ້ວພວກເຂົາທັງຫລາຍຈະຮູ້ວ່າເຮົາແມ່ນພຣະຜູ້ເປັນເຈົ້າ ເມື່ອເຮົາເອົາດາບຂອງເຮົາໃສ່
ມືຂອງກະສັດແຫ່ງບາບີໂລນ ເພິ່ນຈະຍື່ນມັນອອກຕໍ່ສູ້ແຜ່ນດິນເອຢິບ 26ເຮົາຈະໃຫ້ຄົນເອຢິບ
ກະຈັດກະຈາຍໄປຢູ່ທ່າມກາງປະຊາຊາດ ແລະກະຈາຍເຂົ້າໄປຕາມປະເທດຕ່າງໆ ແລ້ວພວກ
ເຂົາຈະຮູ້ວ່າເຮົາແມ່ນພຣະຜູ້ເປັນເຈົ້າ”

# ບົດທີ 31

## ຄຳຂອງຜູ້ປະກາດພຣະທຳກ່າວໂທດຟາຣາໂອ

1ແລະຕໍ່ມາ ເມື່ອວັນທີໜຶ່ງເດືອນທີສາມ ໃນປີທີສິບເອັດ ພຣະທຳຂອງພຣະຜູ້ເປັນເຈົ້າມາ
ເຖິງຂ້າພະເຈົ້າວ່າ 2“ບຸດແຫ່ງມະນຸດເອີຍ ຈົ່ງກ່າວແກ່ຟາຣາໂອກະສັດແຫ່ງເອຢິບ ແລະແກ່
ປະຊາຊົນຂອງລາວວ່າ ໃນຄວາມເປັນໃຫຍ່ເປັນໂຕຂອງທ່ານນັ້ນ ທ່ານເໝືອນຜູ້ໃດ 3ເບິ່ງແມ
ຄົນອັດຊີເຣຍປຽບໄດ້ກັບໄມ້ແປກໃນເລບານອນ ມີກິ່ງງ່າງາມ ມີໃບຮົ່ມ ແລະສູງຫລາຍ ມີ
ຍອດຢູ່ທ່າມກາງກິ່ງງ່າໄມ້ໜາທຶບ 4ມີນ້ຳເຮັດໃຫ້ມັນໃຫຍ່ຂຶ້ນ ນ້ຳເຮັດໃຫ້ມັນປົ່ງສູງ ເຮັດໃຫ້ແມ່-
ນ້ຳໄຫລຮອບບ່ອນທີ່ປູກມັນໄວ້ ເຮັດໃຫ້ແມ່ນ້ຳໄຫລອອກໄປທົ່ວຕົ້ນໄມ້ໃນປ່າທັງໝົດ 5ດັ່ງນັ້ນ
ມັນຈຶ່ງສູງເໜືອຕົ້ນໄມ້ໃນປ່າທັງຫລາຍ ກິ່ງງ່າໄມ້ກໍແຕກໃຫຍ່ ແລະກ້ານກໍຍາວ ເພາະນ້ຳເຮັດ
ໃຫ້ປົ່ງຂຶ້ນ 6ນົກໃນອາກາດທັງໝົດໄດ້ມາເຮັດຮັງຢູ່ໃນກິ່ງງ່າຂອງມັນ ສັດປ່າທັງໝົດອອກມາຢູ່
ກ້ອງກ້ານ ປະຊາຊາດໃຫຍ່ທັງໝົດອາໄສຢູ່ກ້ອງຮົ່ມເງົາຂອງມັນ 7ມັນກໍງົດງາມດ້ວຍຄວາມ
ໃຫຍ່ໂຕຂອງມັນ ດ້ວຍຄວາມຍາວແຫ່ງກ້ານຂອງມັນ ເພາະຮາກຂອງມັນຢັ່ງເລິກລົງໄປຍັງນ້ຳ
ອັນອຸດົມສົມບູນ 8ຕົ້ນແປກທີ່ຢູ່ໃນສວນຂອງພຣະເຈົ້າກໍເຊື່ອງມັນໄວ້ບໍ່ໄດ້ ຕົ້ນສົນກໍຍັງບໍ່ເທົ່າ
ກ້ານຂອງມັນ ຕົ້ນໂພກໍບໍ່ເທົ່າກິ່ງງ່າຂອງມັນ ບໍ່ມີໄມ້ຕົ້ນໃດໃນສວນຂອງພຣະເຈົ້າທີ່ມີຄວາມ
ງາມເໝືອນມັນ 9ເຮົາໄດ້ເຮັດໃຫ້ມັນງາມດ້ວຍກິ່ງກ້ານອັນຫລວງຫລາຍຂອງມັນ ຕົ້ນໄມ້ທັງໝົດ
ໃນສວນເອເດັນກໍອິດສາມັນ ຄືຕົ້ນໄມ້ຊຶ່ງຢູ່ໃນສວນຂອງພຣະເຈົ້າ

10ເພາະສະນັ້ນ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ ເພາະວ່າມັນສູງ ແລະຊູຍອດ
ຂອງມັນຂຶ້ນຢູ່ທ່າມກາງກິ່ງງ່າໄມ້ໜາທຶບ ແລະຈິດໃຈຂອງມັນກໍຈອງຫອງເພາະຄວາມສູງຂອງ
ມັນ 11ເຮົາຈຶ່ງມອບມັນໄວ້ໃນມືຂອງຜູ້ໜຶ່ງທີ່ໄດ້ອານຸພາບໃນບັນດາປະຊາຊາດ ຜູ້ນັ້ນຈະຈັດການ
ກັບມັນແນ່ນອນ ເຮົາໄດ້ໄລ່ມັນອອກເພາະຄວາມຊົ່ວຮ້າຍຂອງມັນ 12ຄົນຕ່າງດ້າວ ຄືຊົນຊາດທີ່
ທາລຸນທີ່ສຸດໃນບັນດາປະຊາຊາດ ໄດ້ລົ້ມມັນລົງ ແລະຖິ້ມໄວ້ ກິ່ງງ່າຂອງມັນຕົກລົງເທິງພູເຂົາ
ທັງຫລາຍ ແລະໃນພູເຂົາທັງໝົດ ກ້ານຫັກຂອງມັນຢູ່ໃນຫ້ວຍທັງໝົດຂອງແຜ່ນດິນ ແລະບັນ-
ດາຊົນຊາດທັງຫລາຍຂອງໂລກລົງໄປຈາກຮົ່ມເງົາ ຂອງມັນ ແລະຖິ້ມມັນເສຍ 13ນົກໃນອາ-
ກາດທັງໝົດຈະອາໄສຢູ່ເທິງຕົ້ນໄມ້ທີ່ຕາຍແລ້ວ ແລະສັດປ່າທັງປວງຈະຢູ່ເທິງກ້ານຂອງມັນ
14ທີ່ເປັນເຊັ່ນນີ້ ກໍເພື່ອບັນດາຕົ້ນໄມ້ທີ່ຢູ່ແຄມນ້ຳຈະບໍ່ປົ່ງຂຶ້ນສູງຫລາຍ ຫລືຊູຍອດຂຶ້ນທ່າມກາງ
ກິ່ງງ່າໄມ້ໜາທຶບ ແລະເພື່ອບໍ່ໃຫ້ບັນດາຕົ້ນໄມ້ທີ່ດື່ມນ້ຳຂຶ້ນສູງຢ່າງນັ້ນໄດ້ ເພາະວ່າມັນທັງ-
ຫລາຍຕ້ອງມອບໃຫ້ແກ່ຄວາມຕາຍ ມອບໃຫ້ແກ່ໂລກບາດານ ທ່າມກາງລູກທັງຫລາຍຂອງມະ-
ນຸດກັບຜູ້ທີ່ໄດ້ລົງໄປຍັງຂຸມຝັງສົບຄົນຕາຍ

[15]ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ ໃນມື້ທີ່ມັນລົງໄປຍັງແດນຄົນຕາຍ ເຮົາເຮັດໃຫ້
ລຳນ້ຳຕ່າງໆໄວ້ທຸກໃຫ້ມັນ ແລະຫ້າມແມ່ນ້ຳຂອງມັນໄວ້ ນ້ຳເປັນຈຳນວນຫລາຍຈະຍັບຍັ້ງ ເຮົາ
ປົກຄຸມເລບານອນໄວ້ໃຫ້ກຸ້ມຢູ່ເພື່ອມັນ ແລະຖືກຕົ້ນໄມ້ໃນທົ່ງນາທັງໝົດຈະສະຫລົບເພາະມັນ
[16]ເຮົາເຮັດໃຫ້ປະຊາຊາດສັ່ນສະເທືອນດ້ວຍສຽງທີ່ມັນລົ້ມລົງ ເມື່ອເຮົາໂຍນມັນລົງໄປທີ່ນາລົກ
ພ້ອມກັບບັນດາຜູ້ທີ່ລົງໄປໃນຂຸມຝັງສົບ ແລະຕົ້ນໄມ້ທັງໝົດໃນເອເດັນ ຕົ້ນໄມ້ທີ່ຄັດເລືອກແລ້ວ
ແລະຕົ້ນໄມ້ທີ່ດີທີ່ສຸດຂອງເລບານອນ ຕົ້ນໄມ້ທຸກຕົ້ນທີ່ດື່ມນ້ຳຈະໄດ້ຮັບຄວາມເລົ້າໂລມທີ່ຢູ່ໃນ
ໂລກບາດານ [17]ປະຊາຊາດເຫລົ່ານີ້ຈະລົງໄປໃນນາລົກກັບລາວດ້ວຍ ໄປຢູ່ກັບບັນດາຜູ້ທີ່ຖືກຂ້າ
ດ້ວຍດາບ ຄືບັນດາຜູ້ທີ່ເປັນເໝືອນແຂນຂອງລາວ ທີ່ຢູ່ກ້ອງຮົ່ມເງົາຂອງລາວທ່າມກາງປະຊາ-
ຊາດ [18]ດັ່ງນີ້ ເຈົ້າເປັນເໝືອນຜູ້ໃດໃນເລື່ອງສະຫງ່າລາສີ ແລະຄວາມຍິ່ງໃຫຍ່ທ່າມກາງຕົ້ນໄມ້
ແຫ່ງເອເດັນ ເຈົ້າຈະຖືກນຳລົງມາພ້ອມກັບຕົ້ນໄມ້ແຫ່ງເອເດັນໄປໃນໂລກບາດານ ເຈົ້າຈະ
ນອນຢູ່ທ່າມກາງຜູ້ທີ່ບໍ່ໄດ້ເຂົ້າພິທີຕັດ ພ້ອມກັບຜູ້ທີ່ຖືກຂ້າດ້ວຍດາບ ນີ້ຄືຟາຣາໂອ ແລະບັນດາ
ປະຊາຊົນທັງໝົດຂອງລາວ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້”

# ບົດທີ 32

## ບົດຄ່ຳຄວນເລື່ອງຟາຣາໂອ

[1]ຕໍ່ມາເມື່ອວັນທີໜຶ່ງ ເດືອນທີສິບສອງ ໃນປີທີສິບສອງ ພຣະທຳຂອງພຣະຜູ້ເປັນເຈົ້າມາ
ເຖິງຂ້າພະເຈົ້າວ່າ [2]“ບຸດແຫ່ງມະນຸດເອີຍ ຈົ່ງເປັ່ງສຽງຮ້ອງຄ່ຳຄວນເລື່ອງຟາຣາໂອກະສັດແຫ່ງ
ເອຢິບ ແລະກ່າວໃຫ້ ລາວຟັງດັ່ງນີ້ວ່າທ່ານເໝືອນໂຕສິງໜຸ່ມທ່າມກາງປະຊາຊາດ ແຕ່ທ່ານ
ເປັນເໝືອນມັງກອນໃນທະເລທັງຫລາຍ ທ່ານແລ່ນອອກມາໃນແມ່ນ້ຳທັງຫລາຍຂອງທ່ານ ເອົາ
ຕີນຂອງທ່ານກວນນ້ຳ ແລະເຮັດ ແມ່ນ້ຳຂອງມັນເປັນມົນທິນ

[3]ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ ເຮົາຈະກາງແຫຂອງເຮົາປົກຄຸມທ່ານໂດຍກອງ-
ທັບຊົນຊາດທັງຫລາຍ ແລະພວກເຂົາເຫລົ່ານັ້ນຈະລາກທ່ານຂຶ້ນມາດ້ວຍມອງຂອງເຮົາ [4]ເຮົາ
ຈະໂຍນທ່ານລົງເທິງດິນ ແລະຈະຊຸກທ່ານລົງເທິງພື້ນດິນ ແລະຈະເຮັດໃຫ້ນົກທັງໝົດໃນອາ-
ກາດມາຈັບຢູ່ເທິງທ່ານ ເຮົາຈະໃຫ້ທ່ານເປັນອາຫານຂອງສັດທົ່ວທັງໂລກກິນຈົນອີ່ມ [5]ເຮົາຈະ
ເອົາຊີ້ນຂອງທ່ານມາວາງໄວ້ເທິງພູເຂົາ ແລະຖົມພູເຂົາດ້ວຍສົບຂອງທ່ານ [6]ເຮົາຈະໃຫ້ແຜ່ນດິນ
ຊຸ່ມໄປດ້ວຍເລືອດທີ່ກຳລັງໄຫລຂອງທ່ານ ເຖິງແມ່ນພູເຂົາກໍຕາມ ແລະຫ້ວຍຈະເຕັມໄປດ້ວຍ
ທ່ານ [7]ເມື່ອເຮົາມອບທ່ານ ເຮົາຈະປົກຄຸມຟ້າສະຫວັນໄວ້ ແລະເຮັດໃຫ້ດວງດາວມືດໄປ ເຮົາຈະ
ເອົາເມກບັງດວງຕາເວັນ ແລະດວງເດືອນຈະບໍ່ສ່ອງແສງ [8]ແສງສຸກໃສທັງໝົດແຫ່ງສະຫວັນນັ້ນ
ເຮົາຈະເຮັດໃຫ້ມືດຢູ່ເໜືອທ່ານ ແລະວາງຄວາມມືດໄວ້ເໜືອແຜ່ນດິນຂອງທ່ານ ອົງພຣະຜູ້-
ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ແຫລະ [9]ເມື່ອເຮົາທຳລາຍທ່ານທ່າມກາງປະຊາຊາດໃນປະເທດຊຶ່ງ
ທ່ານບໍ່ຮູ້ຈັກນັ້ນ ເຮົາຈະເຮັດໃຫ້ຈິດໃຈຂອງຊົນຊາດທັງຫລາຍລຳບາກ [10]ເມື່ອເຮົາແກວ່ງດາບ
ຂອງເຮົາໄປຕໍ່ໜ້າພວກເຂົາທັງຫລາຍເຮົາຈະເຮັດໃຫ້ຊົນຊາດທັງຫລາຍຕົກໃຈທີ່ທ່ານ ແລະກະ-
ສັດຂອງພວກເຂົາຈະສະທົກສະທ້ານ ເພາະທ່ານໃນມື້ທີ່ທ່ານລົ້ມລົງນັ້ນ ພວກເຂົາທັງຫລາຍຈະ

ຕົວສັ່ນ ເພາະຫ່ວງຊີວິດຂອງຕົນເອງ
[11]ເພາະ ອົງ ພຣະຜູ້ເປັນເຈົ້າ ພຣະເຈົ້າ ກ່າວ ດັ່ງນີ້ ວ່າ ດາບ ຂອງ ກະສັດ ແຫ່ງ ບາບີໂລນ ຈະ ມາ
ເໜືອທ່ານ [12]ເຮົາຈະເຮັດໃຫ້ປະຊາຊົນຂອງທ່ານລົ້ມລົງດ້ວຍດາບຂອງຜູ້ມີກຳລັງ ທຸກຄົນກໍລ້ວນ
ເປັນຄົນທີ່ທາລຸນທີ່ສຸດໃນບັນດາປະຊາຊາດ ພວກເຂົາຈະນຳຄວາມອວດອົ່ງຂອງ ເອຢິບ ໃຫ້ມາ
ເຖິງທີ່ສິ້ນສຸດ ແລະປະຊາຊົນທັງໝົດຂອງມັນຈະຈິບຫາຍ [13]ເຮົາຈະທຳລາຍສັດຂອງເມືອງນັ້ນ
ທັງໝົດ ຈາກຂ້າງແມ່ນ້ຳ ແລະຈະບໍ່ມີຕີນມະນຸດຄົນໃດເຮັດໃຫ້ນ້ຳນັ້ນຂຸ້ນອີກ ຕີນສັດກໍຈະບໍ່
ເຮັດໃຫ້ນ້ຳນັ້ນຂຸ້ນອີກເຊັ່ນກັນ [14]ແລ້ວເຮົາຈະເຮັດໃຫ້ນ້ຳຂອງພວກເຂົາທັງຫລາຍເລີກ ແລະ
ເຮັດໃຫ້ແມ່ນ້ຳທັງຫລາຍຂອງພວກເຂົາໄຫລໄປເໝືອນນ້ຳມັນໄຫລ ອົງພຣະຜູ້ເປັນເຈົ້າພຣະເຈົ້າ
ກ່າວດັ່ງນີ້ແຫລະ [15]ເມື່ອເຮົາເຮັດໃຫ້ແຜ່ນດິນ ເອຢິບ ຮ້າງເປົ່າ ແລະເມື່ອແຜ່ນດິນຖືກປຸ້ນເອົາ
ເຄື່ອງຂອງທີ່ມີຢູ່ໃນແຜ່ນດິນໄປໝົດແລ້ວ ເມື່ອເຮົາທຳລາຍຄົນທັງປວງທີ່ອາໄສຢູ່ໃນເມືອງນັ້ນ
ແລ້ວພວກເຂົາທັງຫລາຍຈະຮູ້ວ່າເຮົາແມ່ນພຣະຜູ້ເປັນເຈົ້າ [16]ນີ້ ເປັນບົດຮ້ອງຄໍ່າຄວນທີ່ຈະຮ້ອງ
ເຫລົ່າທິດາແຫ່ງປະຊາຊາດຈະຮ້ອງບົດນັ້ນ ພວກເຂົາຈະຮ້ອງເລື່ອງ ເອຢິບ ແລະປະຊາຊົນຂອງ
ເອຢິບ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ແຫລະ”

## ບົດຄໍ່າຄວນເລື່ອງປະຊາຊົນເອຢິບ

[17]ຕໍ່ມາເມື່ອວັນທີສິບຫ້າ ເດືອນທີສິບສອງ ໃນປີທີສິບສອງ ພຣະທຳຂອງພຣະຜູ້ເປັນເຈົ້າມາ
ເຖິງຂ້າພະເຈົ້າວ່າ [18]“ບຸດແຫ່ງມະນຸດເອີຍ ຈົ່ງຮ້ອງໄຫ້ເພື່ອປະຊາຊົນ ເອຢິບ ແລະຈົ່ງສົ່ງພວກ
ເຂົາລົງໄປ ທັງຕົວເຂົາ ແລະເຫລົ່າທິດາແຫ່ງປະຊາຊາດທີ່ມີຍົດສັກໄປໃນແດນມໍລະນາ ໄປຫາ
ບັນດາຄົນເຫລົ່ານັ້ນທີ່ຢູ່ໃນຂຸມຝັງສົບຄົນຕາຍແລ້ວ [19]ໃນເລື່ອງຄວາມງາມ ທ່ານງາມລ້ຳເລີດ
ກວ່າຜູ້ໃດບໍ ຈົ່ງລົງໄປ ໄປນອນກັບຜູ້ທີ່ບໍ່ໄດ້ເຂົ້າພິທີຕັດ [20]ພວກເຂົາທັງຫລາຍຈະລົ້ມລົງກາງ
ບັນດາຜູ້ທີ່ຖືກຂ້າດ້ວຍດາບ ມີດາບກຳນົດໄວ້ແລ້ວ ຈົ່ງລາກ ເອຢິບ ໄປພ້ອມກັບປະຊາຊົນທັງ
ໝົດຂອງພວກເຂົາ [21]ພວກຊາຍໜຸ່ມໃນບັນດາຜູ້ທີ່ກ້າຫານຈະເວົ້າເລື່ອງຂອງພວກເຂົາກັບຜູ້
ຊ່ວຍຂອງພວກເຂົາຈາກກາງນາລົກວ່າ ‘ພວກເຂົາໄດ້ລົງມາແລ້ວ ພວກເຂົານອນຢູ່ ຄືຄົນທີ່ບໍ່
ໄດ້ເຂົ້າພິທີຕັດ ທີ່ຖືກຂ້າດ້ວຍດາບ’

[22]ອັດຊີເຣຍກໍຢູ່ບ່ອນນັ້ນ ລວມທັງຄະນະ ມີຂຸມຝັງສົບຢູ່ຮອບຕົວ ທຸກຄົນຖືກຂ້າ ແລະລົ້ມ
ລົງດ້ວຍດາບ [23]ບ່ອນຝັງສົບຂອງຄົນເຫລົ່ານີ້ຢູ່ທີ່ແດນມໍລະນາສ່ວນທີ່ໄກທີ່ສຸດ ແລະຄະນະ
ຂອງນາງກໍຢູ່ຮອບຂຸມຝັງສົບຂອງນາງ ທຸກຄົນຖືກຂ້າ ລົ້ມລົງດ້ວຍດາບ ເປັນພວກທີ່ໃຫ້ເກີດ
ຄວາມໂກດຮ້າຍໃນແຜ່ນດິນຂອງຄົນເປັນ

[24]ເອລາມກໍຢູ່ບ່ອນນັ້ນ ທັງປະຊາຊົນທັງໝົດກໍຢູ່ຮອບຂຸມສົບຂອງນາງ ທຸກຄົນຖືກຂ້າ ແລະ
ລົ້ມລົງດ້ວຍດາບຜູ້ລົງໄປສູ່ແດນມໍລະນາໂດຍບໍ່ໄດ້ເຂົ້າພິທີຕັດ ເປັນພວກທີ່ໃຫ້ເກີດຄວາມໂກດ
ຮ້າຍໃນແຜ່ນດິນຂອງຄົນເປັນ ແລະພວກເຂົາຕ້ອງທົນຮັບຄວາມອັບອາຍຂາຍໜ້າກັບຜູ້ທີ່ລົງໄປ
ຂຸມຝັງສົບຄົນຕາຍ [25]ພວກເຂົາໄດ້ເຮັດໃຫ້ນາງນອນໃນໝູ່ພວກຜູ້ທີ່ຖືກຂ້າພ້ອມກັບປະຊາຊົນທັງ
ໝົດຂອງນາງ ມີຂຸມສົບຢູ່ຮອບຕົວ ເປັນຜູ້ທີ່ບໍ່ໄດ້ເຂົ້າພິທີຕັດທຸກຄົນ ຖືກຂ້າດ້ວຍດາບ ເພາະວ່າ
ພວກເຂົາໃຫ້ເກີດຄວາມໂກດຮ້າຍໃນແຜ່ນດິນຂອງຄົນເປັນ ແລະຕ້ອງທົນຮັບຄວາມອັບອາຍ

ຂາຍໜ້າກັບຜູ້ທີ່ລົງໄປໃນຂຸມຝັງສົບຄົນຕາຍ ພວກເຂົາມີທີ່ຢູ່ໃນໝູ່ພວກຜູ້ຖືກຂ້າ
[26]ເມເຊັກກັບຕູບານກໍຢູ່ບ່ອນນັ້ນ ທັງປະຊາຊົນທັງໝົດຂອງນາງ ຂຸມສົບຂອງນາງທັງສອງ
ຢູ່ຮອບພວກເຂົາທັງຫລາຍ ເປັນຜູ້ທີ່ບໍ່ໄດ້ເຂົ້າພິທີຕັດທຸກຄົນ ຖືກຂ້າດ້ວຍດາບ ເພາະພວກເຂົາ
ເຮັດໃຫ້ເກີດຄວາມໂກດຮ້າຍໃນແຜ່ນດິນຂອງຄົນເປັນ [27]ພວກເຂົາທັງຫລາຍຈະບໍ່ໄດ້ນອນຢູ່ກັບ
ຜູ້ກ້າຫານໃນຈຳພວກທີ່ບໍ່ໄດ້ເຂົ້າພິທີຕັດທີ່ໄດ້ລົ້ມລົງ ລົງໄປໃນນາລົກພ້ອມກັບອາວຸດຂອງຕົນ
ຜູ້ຊຶ່ງມີດາບວາງໄວ້ກ້ອງຫົວຂອງຕົນ ແລະຄວາມຊົ່ວຊ້າ ກໍຢູ່ເທິງກະດູກຂອງເຂົາ ເພາະວ່າ
ພວກເຂົາເຮັດໃຫ້ຜູ້ກ້າຫານໂກດຮ້າຍຢູ່ໃນແຜ່ນດິນຂອງຄົນເປັນ

[28]ດັ່ງນັ້ນ ທ່ານຈະຕ້ອງຖືກຫັກໃນໝູ່ພວກຜູ້ທີ່ບໍ່ໄດ້ເຂົ້າພິທີຕັດ ແລະນອນຢູ່ກັບຄົນເຫລົ່ານັ້ນ
ທີ່ຖືກຂ້າດ້ວຍດາບ

[29]ເອໂດມກໍຢູ່ບ່ອນນັ້ນ ຄືບັນດາກະສັດ ແລະບັນດາເຈົ້ານາຍທັງຫລາຍຂອງນາງ ເຖິງແມ່ນ
ວ່າພວກເຂົາມີລິດທານຸພາບ ພວກເຂົາຍັງຖືກນຳມາວາງໄວ້ກັບບັນດາຄົນເຫລົ່ານັ້ນ ທີ່ຖືກຂ້າ
ດ້ວຍດາບ ພວກເຂົາຈະນອນຢູ່ກັບຜູ້ທີ່ບໍ່ໄດ້ເຂົ້າພິທີຕັດ ກັບບັນດາຄົນທີ່ໄດ້ລົງໄປຍັງຂຸມຝັງສົບ
ຄົນຕາຍ

[30]ເຈົ້ານາຍຈາກທິດເໜືອກໍຢູ່ບ່ອນນັ້ນນຳກັນໝົດ ຄົນຊີໂດນທັງໝົດ ຜູ້ທີ່ລົງໄປດ້ວຍຄວາມ
ອັບອາຍພ້ອມກັບຜູ້ທີ່ຖືກຂ້າ ຍ້ອນຄວາມໂກດຮ້າຍທັງໝົດຊຶ່ງພວກເຂົາໄດ້ເຮັດຂຶ້ນດ້ວຍກຳລັງ
ຂອງຕົນ ພວກເຂົານອນຢູ່ບ່ອນນັ້ນ ບໍ່ເຂົ້າພິທີຕັດພ້ອມກັບຜູ້ທີ່ຖືກຂ້າດ້ວຍດາບ ແລະທົນຮັບ
ຄວາມອັບອາຍຂາຍໜ້າ ກັບບັນດາຜູ້ທີ່ລົງໄປໃນຂຸມຝັງສົບຄົນຕາຍ

[31]ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວວ່າ ເມື່ອຟາຣາໂອເຫັນພວກເຫລົ່ານັ້ນແລ້ວ ລາວກໍຈະ
ເບົາໃຈໃນເລື່ອງປະຊາຊົນທັງໝົດຂອງຕົນ ຟາຣາໂອ ແລະປະຊາຊົນທັງໝົດຂອງລາວຖືກຂ້າ
ດ້ວຍດາບ [32]ເພາະເຮົາໄດ້ໃຫ້ເກີດຄວາມຕົກໃຈຢ້ານໃນແຜ່ນດິນຂອງຄົນເປັນ ເພາະສະນັ້ນ
ພວກເຂົາຈະຖືກວາງໄວ້ທ່າມກາງຜູ້ທີ່ບໍ່ໄດ້ເຂົ້າພິທີຕັດ ພ້ອມກັບຄົນເຫລົ່ານັ້ນທີ່ຖືກຂ້າດ້ວຍດາບ
ທັງຟາຣາໂອ ແລະປະຊາຊົນທັງໝົດຂອງລາວ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ແຫລະ”

# ບົດທີ 33

## ຄົນຍາມກັບປະຊາຊົນ

[1]ພຣະຜູ້ເປັນເຈົ້າຊົງກ່າວກັບຂ້າພະເຈົ້າວ່າ [2]“ບຸດແຫ່ງມະນຸດເອີຍ ຈົ່ງບອກປະຊາຊົນວ່າ
ເມື່ອເຮົາເຮັດໃຫ້ສົງຄາມເກີດຂຶ້ນໃນປະເທດໜຶ່ງ ປະຊາຊົນໃນປະເທດນັ້ນກໍຈະແຕ່ງຕັ້ງຄົນໜຶ່ງ
ເປັນຜູ້ຍາມ. [3]ເມື່ອຄົນຍາມເຫັນສັດຕູເຂົ້າມາໃກ້ ລາວຈະເປົ່າແກປຸກເຕືອນທຸກໆ ຄົນ. [4]ຖ້າ
ຫາກຄົນໜຶ່ງໄດ້ຍິນສຽງແກ ແຕ່ບໍ່ເອົາໃຈໃສ່ໃນສຽງຕັກເຕືອນ ສັດຕູກໍຈະມາຂ້າຄົນນັ້ນເສຍ
ແລ້ວຄວາມຜິດຈະເປັນຂອງຜູ້ຕາຍເອງ. [5]ເພາະວ່າບໍ່ເອົາໃຈໃສ່ໃນສຽງຕັກເຕືອນ ຖ້າລາວເອົາ-
ໃຈໃສ່ກໍຈະສາມາດໜີໄປໄດ້. [6]ຖ້າຄົນເຝົ້າຍາມເຫັນສັດຕູມາ ແຕ່ບໍ່ເປົ່າແກປຸກເຕືອນ ສັດຕູຈະ
ມາຂ້າຄົນບາບທັງຫລາຍຖິ້ມ ແລ້ວເຮົາກໍຈະຖືວ່າ ການຕາຍຂອງຄົນພວກນັ້ນເປັນຄວາມຜິດ
ຂອງຜູ້ເຝົ້າຍາມ.

7ບຸດແຫ່ງມະນຸດເອີຍ ບັດນີ້ ເຮົາຈະແຕ່ງຕັ້ງໃຫ້ເຈົ້າເປັນຜູ້ເຝົ້າຍາມຊົນຊາດອິສຣາເອນທັງ
ໝົດ ຈົ່ງນຳຖ້ອຍຄຳທີ່ເຮົາບອກໃຫ້ໄປຕັກເຕືອນພວກເຂົາ. 8ຖ້າເຮົາປະກາດວ່າ ມີຄົນຊົ່ວຜູ້ໜຶ່ງ
ກຳລັງຈະຕາຍ ແຕ່ເຈົ້າບໍ່ຕັກເຕືອນໃຫ້ລາວປ່ຽນຊີວິດໃໝ່ ລາວກໍຈະຕາຍຍ້ອນຄວາມຜິດຂອງ
ຕົນເອງ ແລ້ວເຮົາກໍຈະຖືວ່າການຕາຍຂອງຜູ້ນັ້ນເປັນຄວາມຜິດຂອງເຈົ້າ. 9ຖ້າວ່າເຈົ້າຕັກເຕືອນ
ລາວແລ້ວ ແຕ່ລາວຍັງບໍ່ເຊົາ ລາວກໍຈະຕາຍຍ້ອນບາບນັ້ນ ແຕ່ຊີວິດຂອງເຈົ້າຈະປອດໄພ.

## ການຮັບຜິດຊອບຂອງແຕ່ລະບຸກຄົນ

10ພຣະຜູ້ເປັນເຈົ້າຊົງກ່າວຕໍ່ຂ້າພະເຈົ້າວ່າ “ບຸດແຫ່ງມະນຸດເອີຍ ຈົ່ງບອກປະຊາຊົນອິສຣາ-
ເອນທີ່ພວກເຂົາເວົ້າວ່າ ຜົນຂອງການເຮັດບາບ ແລະການເຮັດຜິດໄດ້ຕົກຖືກເຮົາແລ້ວ ພວກ
ເຮົາກຳລັງເສື່ອມເສຍໄປ ສະນັ້ນ ເຮັດແນວໃດຈຶ່ງຈະມີຊີວິດຢູ່ໄດ້? 11ຈົ່ງບອກພວກເຂົາວ່າ
ເຮົາເປັນພຣະຜູ້ເປັນເຈົ້າຜູ້ມີຊີວິດຢູ່ ສະນັ້ນ ເຮົາຈຶ່ງບໍ່ພໍໃຈທີ່ເຫັນຄົນບາບຕາຍ ແຕ່ຢາກຈະ
ເຫັນພວກເຂົາເຊົາເຮັດບາບ ແລະມີຊີວິດຢູ່ ອິສຣາເອນເອີຍ ເຈົ້າຈົ່ງເຊົາເຮັດບາບເສຍ ຫລືວ່າ
ພວກເຈົ້າຢາກຕາຍຊັ້ນບໍ?

12ບຸດມະນຸດເອີຍ ບັດນີ້ເຈົ້າຈົ່ງບອກພວກອິສຣາເອນວ່າ ເມື່ອຄົນຊອບທຳເຮັດບາບ ຄວາມ
ດີທີ່ລາວເຄີຍເຮັດມານັ້ນ ຈະບໍ່ຊ່ອຍຫຍັງລາວເລີຍ ຖ້າຄົນຊົ່ວເຊົາເຮັດຊົ່ວ ລາວຈະບໍ່ໄດ້ຖືກ
ລົງໂທດຍ້ອນຄວາມຊົ່ວນັ້ນ ແລະຖ້າຄົນຊອບທຳເລີ່ມຕົ້ນເຮັດບາບ ລາວກໍຈະມີຊີວິດຢູ່ບໍ່ໄດ້.
13ຖ້າຫາກເຮົາສັນຍາວ່າ ຈະໃຫ້ຄົນຊອບທຳມີຊີວິດຢູ່ ແຕ່ລາວເຊື່ອຄວາມດີທີ່ຕົນໄດ້ເຮັດມາ
ແລ້ວແຕ່ອະດີດ ແລ້ວເລີ່ມຕົ້ນເຮັດບາບ ເຮົາຈະບໍ່ລະນຶກເຖິງຄວາມດີໃດໆ ທີ່ຜູ້ນັ້ນໄດ້ເຮັດມາ
ລາວຈະຕ້ອງຕາຍຍ້ອນບາບຂອງລາວເອງ. 14ຖ້າເຮົາເຕືອນຄົນທີ່ຊົ່ວວ່າລາວຈະຕ້ອງຕາຍ ແຕ່
ລາວເຊົາເຮັດບາບແລ້ວຫັນມາເຮັດສິ່ງທີ່ຖືກຕ້ອງ ແລະດີງາມ. 15ເຊັ່ນວ່າຄືນຂອງຈຳນຳໃຫ້ແກ່
ລູກໜີ້ ສິ່ງເຄື່ອງທີ່ລັກມາຄືນໃຫ້ແກ່ເຈົ້າຂອງ ຖ້າລາວເຊົາເຮັດບາບ ແລະປະພຶດຕາມພຣະທຳທີ່
ໃຫ້ມີຊີວິດ ລາວກໍຈະບໍ່ຕາຍ ແຕ່ຈະມີຊີວິດຢູ່ຕໍ່ໄປ. 16ສ່ວນເຮົາຈະໃຫ້ອະໄພບາບທີ່ໄດ້ເຄີຍກະ-
ທຳມາ ຍ້ອນການເຮັດດີ ແລະການເຮັດຖືກຕ້ອງນັ້ນ ລາວຈະມີຊີວິດຢູ່ຕໍ່ໄປ.

17ປະຊາຊົນຂອງເຈົ້າເວົ້າວ່າ ເຮົາເຮັດບໍ່ຍຸດຕິທຳ ບໍ່ແມ່ນຢ່າງນັ້ນດອກ ມັນແມ່ນພວກເຂົາ
ຕ່າງຫາກທີ່ບໍ່ຍຸດຕິທຳ. 18ເມື່ອຄົນຊອບທຳເຊົາເຮັດດີ ແລະເລີ່ມຕົ້ນເຮັດຊົ່ວ ລາວກໍຈະຕາຍ
ຍ້ອນເຮັດຊົ່ວນັ້ນ. 19ເມື່ອຄົນຊົ່ວປ່ຽນໃຈບໍ່ເຮັດບາບ ຫັນມາເຮັດດີ ແລະຖືກຕ້ອງ ຊີວິດຂອງ
ລາວກໍຈະປອດໄພ. 20ໂອ ອິສຣາເອນເອີຍ ແຕ່ປານນັ້ນ ພວກເຈົ້າຍັງເວົ້າວ່າ ເຮົາເຮັດບໍ່ຍຸດຕິ
ທຳຢູ່ ສະນັ້ນ ເຮົາຈະພິພາກສາໂທດຕາມທີ່ເຈົ້າໄດ້ກະທຳ.”

## ຂ່າວກຸງເຢຣູຊາເລັມແຕກ

21ສິບສອງປີ ຫລັງຈາກພວກຂ້າພະເຈົ້າໄດ້ຖືກຈັບໄປເປັນຊະເລີຍເມື່ອວັນທີຫ້າເດືອນສິບ ມີ
ຊາຍຜູ້ໜຶ່ງໜີອອກຈາກກຸງເຢຣູຊາເລັມບອກຂ້າພະເຈົ້າວ່າ ກຸງເຢຣູຊາເລັມແຕກແລ້ວ. 22ໃນ
ຕອນຄ່ຳກ່ອນຊາຍຜູ້ນັ້ນມາເຖິງ ຂ້າພະເຈົ້າໄດ້ຕົກຢູ່ໃນອຳນາດຂອງພຣະຜູ້ເປັນເຈົ້າຈົນເວົ້າບໍ່
ໄດ້ ແລ້ວໃນຕອນເຊົ້າມື້ອື່ນ ເມື່ອຊາຍຜູ້ນັ້ນມາເຖິງ ພຣະຜູ້ເປັນເຈົ້າກໍຊົງໂຜດໃຫ້ຂ້າພະເຈົ້າ
ເວົ້າໄດ້.

## ບາບຂອງປະຊາຊົນ

23-24ພຣະຜູ້ເປັນເຈົ້າ ຊົງກ່າວຕໍ່ຂ້າພະເຈົ້າວ່າ, "ບຸດແຫ່ງມະນຸດເອີຍ ປະຊາຊົນທີ່ເຄີຍອາໄສ
ຢູ່ຕາມຫົວເມືອງຮ້າງໃນປະເທດ ອິສຣາເອນ ເວົ້າວ່າ, ແຕ່ກ່ອນມີ ອັບຣາຮາມ ຄົນດຽວ ສະນັ້ນ
ເພິ່ນຈຶ່ງໄດ້ຮັບທີ່ດິນຈາກ ພຣະເຈົ້າ ແຕ່ຜູ້ດຽວ ມາບັດນີ້ ພວກເຮົາມີຫລາຍຄົນ ທີ່ດິນນັ້ນຈຶ່ງເປັນ
ຂອງພວກເຮົາທຸກໆ ຄົນ. 25ຈົ່ງບອກພວກເຂົາວ່າເຮົາເວົ້າດັ່ງນີ້ ພວກເຈົ້າກິນຊີ້ນພ້ອມກັບຊີ້ນ
ຂາບໄຫວ້ຮູບເຄົາລົບ ແລະຂ້າຄົນ ແລ້ວຍັງຈະຄິດວ່າແຜ່ນດິນນັ້ນເປັນຂອງພວກເຈົ້າຢູ່ບໍ?
26ພວກເຈົ້າໄດ້ວາງໃຈໃນດາບຂອງຕົນ ການກະທຳກໍເປັນການໜ້າກຽດຊັງ ມີການລ່ວງເກີນເມຍ
ເມຍຄົນອື່ນ ສະນັ້ນ ເປັນຫຍັງຈຶ່ງຄິດວ່າທີ່ດິນນັ້ນເປັນຂອງພວກເຈົ້າ?

27ຈົ່ງບອກພວກເຂົາວ່າ ພຣະຜູ້ເປັນເຈົ້າ ຊົງເຕືອນດັ່ງນີ້ ເຮົາເປັນ ພຣະຜູ້ເປັນເຈົ້າ ທີ່ມີຊີວິດ
ສະນັ້ນ ປະຊາຊົນທີ່ອາໄສຢູ່ໃນຫົວເມືອງຮ້າງຈະຖືກຂ້າຕາຍ ຜູ້ທີ່ຢູ່ນອກເມືອງຈະຖືກສັດປ່າກິນ
ຜູ້ທີ່ລີ້ຢູ່ຕາມພູ ແລະຖໍ້າຈະເຈັບປ່ວຍລົ້ມຕາຍ. 28ເຮົາຈະເຮັດໃຫ້ປະເທດນັ້ນຮ້າງເປົ່າເສົ້າໝອງ
ອຳນາດທີ່ພວກເຂົາມີ ແລະພາກພູມໃຈນັ້ນ ຈະໝົດສິ້ນລົງ ພູທັງຫລາຍໃນ ອິສຣາເອນ ຈະເປັນ
ປ່າຮ້າງເປົ່າ ຈະບໍ່ມີຄົນຢູ່ ຫລືເດີນທາງຜ່ານໄປມາ. 29ເມື່ອເຮົາລົງໂທດປະຊາຊົນຍ້ອນພວກ
ເຂົາເຮັດບາບ ແລະເຮັດໃຫ້ປະເທດນັ້ນຮ້າງເປົ່າແລ້ວ ພວກເຂົາຈຶ່ງຈະຮູ້ວ່າ ເຮົາ ແມ່ນ ພຣະຜູ້-
ເປັນເຈົ້າ."

## ປະຊາຊົນບໍ່ເຊື່ອຟັງຜູ້ປະກາດພຣະທຳ

30ພຣະຜູ້ເປັນເຈົ້າ ຊົງກ່າວວ່າ, "ບຸດແຫ່ງມະນຸດເອີຍ ເມື່ອປະຊາຊົນຂອງເຈົ້າພົບກັນຢູ່ໃກ້
ກຳແພງເມືອງ ຫລືຕາມປະຕູບ້ານເຮືອນນັ້ນ ພວກເຂົາກໍຊັກຊວນກັນໄປຟັງຖ້ອຍຄຳທີ່ມາຈາກ
ພຣະຜູ້ເປັນເຈົ້າ. 31ດັ່ງນັ້ນ ໄພ່ພົນຂອງເຮົາຈຶ່ງຫລັ່ງໄຫລກັນມາຟັງ ແຕ່ພວກເຂົາບໍ່ໄດ້ເຮັດຕາມ
ເຈົ້າບອກ ເພາະວ່າພວກເຂົາມັກເວົ້າຕົວະ ແລະຮັກເງິນຫລາຍກວ່າພຣະທຳຂອງ ພຣະເຈົ້າ.
32ດ້ວຍວ່າ ພວກເຂົາມາຟັງຖ້ອຍຄຳທັງໝົດຂອງເຈົ້າເໝືອນມາຟັງໝໍລຳ ຫລືການເປົ່າແຄນເທົ່າ
ນັ້ນ ຈຶ່ງບໍ່ມີໃຜເຊື່ອຟັງເລີຍ. 33ສະນັ້ນ ເມື່ອຖ້ອຍຄຳທັງໝົດຂອງເຈົ້າເປັນຈິງຂຶ້ນມາ ພວກເຂົາ
ຈຶ່ງຈະຮູ້ວ່າຜູ້ປະກາດພຣະທຳມີຢູ່ໃນພວກເຂົາແທ້."

# ບົດທີ 34

## ຜູ້ລ້ຽງແກະຂອງອິສຣາເອນ

1ພຣະຜູ້ເປັນເຈົ້າ ຊົງກ່າວຕໍ່ຂ້າພະເຈົ້າວ່າ, 2"ບຸດແຫ່ງມະນຸດເອີຍຈົ່ງປະກາດໃຫ້ພວກລ້ຽງ
ແກະຂອງ ອິສຣາເອນ ຮູ້ສິ່ງທີ່ເຮົາ ພຣະຜູ້ເປັນເຈົ້າ ເວົ້າວ່າ ໄພພິບັດຈະເກີດຂຶ້ນແກ່ພວກເຈົ້າ
ຜູ້ລ້ຽງແກະຂອງ ອິສຣາເອນ ເພາະພວກເຈົ້າໄດ້ລ້ຽງຕົນເອງ ບໍ່ແມ່ນລ້ຽງແກະ. 3ພວກເຈົ້າດື່ມ-
ນໍ້ານົມ ນຸ່ງຫົ່ມເຄື່ອງທີ່ເຮັດດ້ວຍຂົນແກະ ແລະຂ້າກິນຊີ້ນແກະໂຕທີ່ດີທີ່ສຸດ ແຕ່ບໍ່ໄດ້ລ້ຽງມັນ
ແລະບໍ່ໄດ້ເບິ່ງແຍງແກະໂຕທີ່ຈ່ອຍຜອມ. 4ບໍ່ໄດ້ປິ່ນປົວໂຕທີ່ເຈັບໄຂ ບໍ່ໄດ້ພັນບາດແຜໃຫ້ໂຕທີ່
ຖືກທຳຮ້າຍ ບໍ່ໄດ້ນຳໂຕທີ່ຫລົງຝູງກັບຄືນມາ ຫລືບໍ່ໄດ້ຊອກຫາໂຕທີ່ສູນເສຍໄປ ມີແຕ່ເຮັດ
ໂຫດຮ້າຍທາລຸນຕໍ່ມັນເທົ່ານັ້ນ. 5ຈົນພວກມັນແຕກກະຈັດກະຈາຍໄປຍ້ອນບໍ່ມີຜູ້ລ້ຽງ ອັນເປັນ

ເຫດໃຫ້ສັດປ່າມາກັດກິນມັນເສຍ. [6]ດັ່ງນັ້ນ ແກະຂອງເຮົາຈຶ່ງຊັດເຊພະເນຈອນໄປຕາມພູ ແລະ
ເນີນເຂົາ ພວກມັນໄດ້ແຕກກະຈັດກະຈາຍໄປທົ່ວໂລກ ໂດຍບໍ່ມີໃຜຊອກຄົ້ນ ຫລືສະແຫວງຫາ
ມັນເລີຍ.

[7-8]ບັດນີ້ ພວກເຈົ້າຜູ້ລ້ຽງແກະເອີຍ ຈົ່ງຟັງສິ່ງທີ່ເຮົາຈະບອກ ເຮົາເປັນພຣະເຈົ້າຜູ້ມີຊີວິດຢູ່
ສະນັ້ນ ຄວນຟັງເຮົາດີກວ່າ ແກະຂອງເຮົາໄດ້ຖືກຝູງສັດປ່າກັດກິນແລ້ວ ເພາະວ່າມັນບໍ່ມີຜູ້ລ້ຽງ
ຜູ້ລ້ຽງຂອງເຮົາບໍ່ໄດ້ຊອກຫາມັນ ພວກເຂົາລ້ຽງຕົວເອງ ບໍ່ແມ່ນລ້ຽງແກະ. [9]ດັ່ງນັ້ນ ຜູ້ລ້ຽງແກະ
ຂອງເຮົາເອີຍ ຈົ່ງຟັງເຮົາເດີ້ ເຮົາພຣະຜູ້ເປັນເຈົ້າຂໍປະກາດວ່າ, [10]ເຮົາຈະເປັນສັດຕູກັບພວກ
ເຈົ້າ ຈະເອົາແກະຂອງເຮົາໜີໄປຈາກເຈົ້າ ຈະບໍ່ໃຫ້ພວກເຈົ້າລ້ຽງມັນ ແລະລ້ຽງຕົວເອງຕໍ່ໄປອີກ
ເຮົາຈະຊ່ອຍພວກມັນໜີຈາກເຈົ້າ ຈະບໍ່ໃຫ້ມັນເປັນອາຫານຂອງພວກເຈົ້າອີກ.

## ຜູ້ລ້ຽງແກະທີ່ດີ

[11]ເຮົາ ພຣະຜູ້ເປັນເຈົ້າບອກເຈົ້າວ່າ ເຮົາຈະຄົ້ນຫາແກະຂອງເຮົາ ແລະລ້ຽງມັນເອງ. [12]ຜູ້
ລ້ຽງແກະເຕົ້າໂຮມເອົາແກະໂຕທີ່ແຕກຝູງໄປເຂົ້າກັນອີກສັນໃດ ເຮົາກໍຈະນຳເອົາແກະໂຕທີ່ແຕກ
ຝູງໄປໃນຍາມອັນຕະລາຍ ແລະບ່ອນທີ່ມືດມິດກັບຄືນມາຈາກທຸກໆ ບ່ອນສັນນັ້ນ. [13]ເຮົາຈະ
ເອົາມັນອອກມາຈາກຕ່າງປະເທດ ແລະເຕົ້າໂຮມເຂົ້າກັນ ຈະນຳມາໄວ້ໃນປະເທດຂອງມັນເອງ
ຈະລ້ຽງມັນຢູ່ເທິງພູອິສຣາເອນ ຢູ່ໃກ້ຫ້ວຍຮ່ອງ ແລະໃນທຸກໆ ບ່ອນທີ່ມີຄົນອາໄສຢູ່ ຈະປ່ອຍ
ໃຫ້ມັນກິນຫຍ້າຢູ່ຕາມພູ. [14]ແລະທົ່ງຫຍ້າອັນຂຽວສົດໃນປະເທດອິສຣາເອນຢ່າງປອດໄພ.
[15]ເຮົາເອງຈະເປັນຜູ້ລ້ຽງແກະຂອງເຮົາ ແລະຈະຊອກຫາບ່ອນໃຫ້ມັນພັກຜ່ອນ ເຮົາ ພຣະຜູ້-
ເປັນເຈົ້າໄດ້ກ່າວດັ່ງນີ້ແຫລະ. [16]ເຮົາຈະຊອກຫາແກະໂຕທີ່ສູນເສຍໄປ ຈະນຳໂຕທີ່ຫລົງທາງ
ກັບມາ ຈະພັນແຜ ແລະປິ່ນປົວໂຕທີ່ບາດເຈັບໃຫ້ດີ ຈະປ່ອຍໂຕທີ່ຕຸ້ຍພີ ແລະແຂງແຮງຢູ່ຢ່າງ
ສະບາຍ ເພາະວ່າເຮົາເປັນຜູ້ລ້ຽງຢ່າງຍຸດຕິທຳ.

[17]ຝູງແກະຂອງເຮົາເອີຍ ບັດນີ້ ເຮົາບອກເຈົ້າວ່າ ເຮົາຈະພິພາກສາພວກເຈົ້າທຸກໂຕ ຈະ
ແຍກໂຕທີ່ດີອອກຈາກໂຕບໍ່ດີ ແລະແຍກແກະອອກຈາກແບ້. [18]ມີບາງໂຕໃນພວກເຈົ້າບໍ່ພໍໃຈກິນ
ຫຍ້າຢ່າງດີ ຈຶ່ງພາກັນຢຽບຢໍ່າຫຍ້າທີ່ຕົນບໍ່ກິນ ພວກເຈົ້າດື່ມນໍ້າໃສ ແລ້ວກໍກວນນໍ້າທີ່ຍັງເຫລືອ
ຢູ່ໃຫ້ຂຸ່ນ. [19]ແກະໂຕອື່ນໆ ອີກຂອງເຮົາ ຈຶ່ງຈຳເປັນຕ້ອງກິນຫຍ້າທີ່ພວກເຈົ້າຢຽບ ແລະຕ້ອງ
ດື່ມນໍ້າທີ່ພວກເຈົ້າກວນ.

[20]ດັ່ງນັ້ນແຫລະ ເຮົາຈຶ່ງບອກວ່າຈະພິພາກສາພວກເຈົ້າ ຄືແກະຕຸ້ຍ ແລະແກະຈ່ອຍ.
[21]ເພາະວ່າເຈົ້າໄດ້ຊົນແກະໂຕເຈັບໂຊໃຫ້ອອກໜີຈາກຝູງ [22]ແຕ່ເຮົາຈະຊ່ອຍແກະຂອງເຮົາໃຫ້
ພົ້ນໄພ ຈະບໍ່ໃຫ້ມັນຖືກຂົ່ມເຫັງອີກຕໍ່ໄປ.

[23-24]ເຮົາຈະແຕ່ງຕັ້ງໃຫ້ດາວິດຜູ້ຮັບໃຊ້ຂອງເຮົາເປັນຜູ້ລ້ຽງມັນ ເຮົາຈະເປັນພຣະເຈົ້າຂອງ
ພວກມັນ ສ່ວນດາວິດຜູ້ຮັບໃຊ້ຂອງເຮົາຈະເປັນນາຍຂອງມັນ ເຮົາກ່າວດັ່ງນີ້ແຫລະ.

[25]ເຮົາຈະໃຫ້ຄຳໝັ້ນສັນຍາ ແລະຮັບປະກັນຄວາມປອດໄພໃຫ້ພວກມັນ ຈະກຳຈັດສັດຮ້າຍ
ທັງໝົດອອກຈາກແຜ່ນດິນ ເພື່ອວ່າແກະຂອງເຮົາຈະໄດ້ອາໄສຢູ່ໃນທົ່ງນາແລະນອນໃນປ່າຢ່າງ
ປອດໄພ. [26]ເຮົາຈະອວຍພອນພວກມັນໃຫ້ອາໄສຢູ່ພູສັກສິດຂອງເຮົາ ຈະໃຫ້ຝົນຕົກລົງມາ ຕາມ

ຄວາມຕ້ອງການຂອງມັນ. 27ເພື່ອຕົ້ນໄມ້ທັງໝົດຈະເກີດໝາກ ທົ່ງນາຈະມີເຂົ້າ ແລະແກະທຸກໆ
ໂຕຈະມີຊີວິດຢູ່ໃນປະເທດຂອງມັນເອງຢ່າງປອດໄພ ເມື່ອໃດເຮົາປ່ອຍໃຫ້ໄພ່ພົນຂອງເຮົາພົ້ນ
ຈາກການເປັນທາດ ແລະແກ້ໂສ້ອອກເປັນອິດສະຫລະແລ້ວ ເມື່ອນັ້ນແຫລະ ພວກເຂົາຈຶ່ງຈະຮູ້
ວ່າເຮົາຄື ພຣະຜູ້ເປັນເຈົ້າ. 28ພວກເຂົາຈະບໍ່ຖືກຊົນຊາດອື່ນມາຮິບກອບອີກຕໍ່ໄປ ຈະບໍ່ຖືກພວກ
ສັດປ່າມາກັດກິນ ແຕ່ຈະມີຊີວິດຢູ່ຢ່າງປອດໄພ ບໍ່ຢ້ານກົວຫຍັງ. 29ເຮົາຈະຍົກທົ່ງນາອັນອຸດົມ-
ສົມບູນໃຫ້ແກ່ພວກເຂົາ ຈະໃຫ້ຄວາມອຶດຢາກໃນແຜ່ນດິນສິ້ນສຸດລົງ ຊົນຊາດອື່ນຈະບໍ່ຫຍໍ້ຫຍັນ
ພວກເຂົາອີກ ແລະຄົນທັງປວງຈະຮູ້ວ່າ ເຮົາເປັນຜູ້ຄຸ້ມຄອງອິສຣາເອນ. 30ຄົນທັງປວງຈະຮູ້ວ່າ
ເຮົາເປັນຜູ້ຄຸ້ມຄອງອິສຣາເອນ ແລະຮູ້ວ່າ ພວກເຂົາເປັນໄພ່ພົນຂອງເຮົາ ຄື ພຣະຜູ້ເປັນເຈົ້າ
ຊົງກ່າວດັ່ງນີ້ແຫລະ.” 31ພຣະຜູ້ເປັນເຈົ້າຊົງກ່າວຕໍ່ໄປອີກວ່າ “ຝູງແກະທີ່ເຮົາລ້ຽງເອີຍ ພວກ
ເຈົ້າເປັນໄພ່ພົນຂອງເຮົາ ແລະເຮົາເປັນພຣະເຈົ້າຂອງເຈົ້າ.”

# ບົດທີ 35

## ພູເຂົາຊີນາຍຈະເປັນທີ່ຮ້າງເປົ່າ

1ພຣະທຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າອີກວ່າ 2“ບຸດແຫ່ງມະນຸດເອີຍ ຈົ່ງມຸ່ງໜ້າ
ຂອງເຈົ້າຕໍ່ສູ້ພູເຂົາເສອີ ແລະປະກາດພຣະທຳຕໍ່ມັນ 3ແລະກ່າວແກ່ມັນວ່າ ອົງພຣະຜູ້ເປັນເຈົ້າ
ພຣະເຈົ້າກ່າວດັ່ງນີ້ວ່າ ເບິ່ງແມ ພູເຂົາເສອີເອີຍ ເຮົາເປັນສັດຕູກັບເຈົ້າ ແລະເຮົາຈະຢຽດມື
ຂອງເຮົາຕໍ່ສູ້ເຈົ້າ ເຮົາຈະເຮັດໃຫ້ເຈົ້າຮ້າງເປົ່າ ແລະຖືກຖິ້ມຮ້າງ 4ເຮົາຈະໃຫ້ຫົວເມືອງຂອງເຈົ້າ
ຖືກປະຖິ້ມ ແລະເຈົ້າຈະເປັນທີ່ຮົກຮ້າງ ເຈົ້າຈະຮູ້ວ່າເຮົາແມ່ນພຣະຜູ້ເປັນເຈົ້າ

5ເພາະເຈົ້າພະຍາບາດຢູ່ເປັນນິດ ແລະໃຫ້ເລືອດຂອງປະຊາຊົນອິສຣາເອນໄຫລອອກດ້ວຍ
ອຳນາດຂອງດາບ ໃນຍາມທີ່ມີຄວາມທຸກລຳບາກຂອງເຂົາ ໃນຍາມທີ່ຄວາມຊົ່ວຊ້າຂອງພວກ
ເຂົາສິ້ນສຸດລົງ 6ອົງພຣະຜູ້ເປັນເຈົ້າພຣະເຈົ້າຈຶ່ງກ່າວວ່າ ເພາະສະນັ້ນ ເຮົາມີຊີວິດຢູ່ສັນໃດ
ເຮົາຈະຕຽມເຈົ້າເພື່ອຮັບໂທດແຫ່ງການໃຫ້ຄົນເລືອດຕົກ ແລະເລືອດຈະໄລ່ຕາມເຈົ້າ ເພາະເຈົ້າ
ບໍ່ໄດ້ກຽດຊັງການເຮັດໃຫ້ຄົນເລືອດຕົກ ເພາະສະນັ້ນ ເລືອດຈຶ່ງຈະໄລ່ຕາມເຈົ້າໄປ 7ເຮົາຈະ
ເຮັດໃຫ້ພູເຂົາເສອີຮ້າງເປົ່າ ແລະເຮົາຈະຕັດຜູ້ທີ່ໄປໆມາໆຈາກມັນ 8ພູເຂົາຂອງມັນນັ້ນ ເຮົາ
ຈະໃຫ້ມີຜູ້ທີ່ຖືກຂ້າເຕັມໄປໝົດ ຜູ້ທີ່ຖືກຂ້າດ້ວຍດາບຈະລົ້ມລົງຕາມໂນນພູຂອງເຈົ້າ ຕາມພູເຂົາ
ຂອງເຈົ້າ ແລະໃນຫ້ວຍທັງໝົດຂອງເຈົ້າ 9ເຮົາຈະເຮັດໃຫ້ເຈົ້າເປັນບ່ອນຮ້າງເປົ່າເປັນນິດ ແລະ
ຕາມຫົວເມືອງຂອງເຈົ້າຈະບໍ່ມີຄົນອາໄສ ແລ້ວເຈົ້າຈະຮູ້ວ່າເຮົາແມ່ນພຣະຜູ້ເປັນເຈົ້າ

10ເພາະເຈົ້າກ່າວວ່າ ‘ປະຊາຊາດທັງສອງນີ້ ແລະປະເທດທັງສອງນີ້ຈະຕ້ອງເປັນຂອງເຮົາ
ເຮົາຈະເອົາພວກເຂົາມາເປັນກຳມະສິດ’ ເຖິງແມ່ນພຣະຜູ້ເປັນເຈົ້າສະຖິດຢູ່ບ່ອນນັ້ນ 11ເພາະ-
ສະນັ້ນ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວວ່າ ເຮົາມີຊີວິດຢູ່ສັນໃດ ເຮົາຈະເຮັດຕໍ່ເຈົ້າຕາມ
ຄວາມຄຽດຮ້າຍແລະຄວາມອິດສາຂອງເຈົ້າ ຊຶ່ງເຈົ້າໄດ້ສະແດງເພາະຄວາມກຽດຊັງຂອງເຈົ້າທີ່
ມີຕໍ່ພວກເຂົາ ເມື່ອເຮົາພິພາກສາເຈົ້າ ເຮົາຈະສະແດງຕົວຂອງເຮົາໃນໝູ່ພວກເຂົາໃຫ້ພວກເຂົາ
ຮູ້ຈັກ 12ແລະເຈົ້າຈະຮູ້ວ່າ ເຮົາແມ່ນພຣະຜູ້ເປັນເຈົ້າ ແລະເຮົາໄດ້ຍິນຄຳຫຍາບຄາຍທັງປວງ

ຂອງເຈົ້າ ຊຶ່ງເຈົ້າໄດ້ເວົ້າຕໍ່ສູ້ພູເຂົາທັງຫລາຍແຫ່ງອິສຣາເອນວ່າ ‘ມັນຖືກຖິ້ມໄວ້ໃຫ້ຮ້າງເປົ່າ
ມັນຖືກມອບໄວ້ໃຫ້ເຮົາກິນ’ [13]ດ້ວຍປາກຂອງເຈົ້າ ເຈົ້າເບັ່ງຕົວເຈົ້າຕໍ່ສູ້ເຮົາ ແລະວ່າກ່າວເຮົາອີກ
ຫລາຍຢ່າງ ເຮົາໄດ້ຍິນແລ້ວ [14]ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ ເພື່ອໃຫ້ທັງໂລກຊື່ນ
ບານ ເຮົາຈະເຮັດໃຫ້ເຈົ້າຮ້າງເປົ່າ [15]ມໍລະດົກແຫ່ງເຊື້ອສາຍອິສຣາເອນນັ້ນ ຕ້ອງຖືກໃຫ້ຮ້າງ
ເປົ່າໄປ ເຈົ້າຊື່ນບານຍິນດີສັນໃດ ເຮົາຈະເຮັດແກ່ເຈົ້າສັນນັ້ນ ພູເຂົາເສອີເອີຍ ລວມທັງເອໂດມ
ທັງໝົດເລີຍ ເຈົ້າຈະຕ້ອງເປັນທີ່ຮ້າງເປົ່າ ແລ້ວພວກເຂົາທັງຫລາຍຈະຮູ້ວ່າເຮົາແມ່ນພຣະຜູ້-
ເປັນເຈົ້າ”

# ບົດທີ 36

## ຊີວິດໃໝ່ຂອງອິສຣາເອນ

[1]“ບຸດແຫ່ງມະນຸດເອີຍ ຈົ່ງທຳນວຍຕໍ່ສູ້ບັນດາຫົວພູທັງຫລາຍແຫ່ງອິສຣາເອນວ່າ, ຫົວພູທັງ-
ຫລາຍແຫ່ງອິສຣາເອນເອີຍ ຈົ່ງຟັງພຣະທຳຂອງພຣະຜູ້ເປັນເຈົ້າ. [2]ພຣະເຈົ້າຊົງກ່າວດັ່ງນີ້ວ່າ,
“ເພາະສັດຕູເວົ້າດັ່ງນີ້ວ່າ, ສະຖານທີ່ສູງແຫ່ງບູຮານນະການເຫລົ່ານັ້ນ ໄດ້ຕົກເປັນກຳມະສິດ
ຂອງເຮົາແລ້ວ.” [3]ເພາະສະນັ້ນ ຈົ່ງທຳນວຍ ແລະກ່າວວ່າ, “ພຣະເຈົ້າຊົງສັ່ງຢ່າງນີ້ ເພາະ
ພວກເຂົາໄດ້ເຮັດໃຫ້ພວກເຈົ້າຖືກຮ້າງເປົ່າ ແລະບີບບັງຄັບເຈົ້າທຸກດ້ານຈົນເຈົ້າຕົກເປັນກຳມະ-
ສິດຂອງປະຊາຊາດທີ່ເຫລືອຢູ່ນັ້ນ ແລະເຈົ້າກາຍເປັນທີ່ນິນທາຂອງປະຊາຊົນ. [4]ຫົວພູທັງຫລາຍ
ແຫ່ງອິສຣາເອນເອີຍ ເພາະສະນັ້ນ ຈົ່ງຟັງພຣະທຳຂອງພຣະເຈົ້າ. ພຣະເຈົ້າຊົງກ່າວດັ່ງນີ້ແກ່
ຫົວພູແລະຫ້ວຍຮ່ອງໜອງບຶງທັງຫລາຍທີ່ຖືກປະຮ້າງ ແລະຖິ້ມເສຍ ອັນເປັນທີ່ເຍາະເຍີ້ຍ ແລະ
ນິນທາຈາກປະຊາຊາດທັງປວງທີ່ຫ້ອມລ້ອມພວກເຂົາຢູ່. [5]ເພາະສະນັ້ນ ພຣະເຈົ້າຊົງສັ່ງຢ່າງນີ້
ວ່າ ດ້ວຍຄວາມຫວງແຫນຢ່າງຫລວງຫລາຍຂອງເຮົາ ເຮົາຈະກ່າວໂທດປະຊາຊາດທີ່ເຫລືອຢູ່
ແລະແກ່ເອໂດມ ຜູ້ທີ່ມອບແຜ່ນດິນຂອງເຮົາໃຫ້ແກ່ຕົນເອງເປັນກຳມະສິດດ້ວຍຄວາມຈອງຫອງ
ພອງຕົວຢ່າງເຕັມໃຈ ແລະໝິ່ນປະໝາດຢ່າງສຸດຂີດ ເພື່ອພວກເຂົາຈະໄດ້ໄລ່ຄົນໃນແຜ່ນດິນ
ນັ້ນອອກໄປ ແລະປຸ້ນເອົາທຸກສິ່ງໄປເສຍ.

[6]ເພາະສະນັ້ນ ຈົ່ງກ່າວຄຳທຳນວຍກ່ຽວກັບແຜ່ນດິນອິສຣາເອນ ຈົ່ງກ່າວແກ່ຫົວພູທັງຫລາຍ
ແລະຫ້ວຍຮ່ອງໜອງບຶງວ່າ ພຣະເຈົ້າຊົງຕັດສັ່ງດັ່ງນີ້ “ເບິ່ງແມ ເຮົາເວົ້າດ້ວຍຄວາມຫວງແຫນ
ແລະຄວາມພິໂລດ ເພາະເຈົ້າໄດ້ທົນຮັບຄວາມອັບອາຍຂາຍໜ້າຈາກປະຊາຊາດ.” [7]ພຣະເຈົ້າ
ຈຶ່ງສັ່ງວ່າ, “ເຮົາປະຕິຍານວ່າ ປະຊາຊາດທີ່ຢູ່ຮອບເຈົ້ານັ້ນ ຈະທົນຮັບຄວາມອັບອາຍຂາຍໜ້າ
ຄືກັນ.

[8]ຫົວພູທັງຫລາຍແຫ່ງອິສຣາເອນເອີຍ ແຕ່ເຈົ້າຈະແຕກກິ່ງຂອງເຈົ້າອອກມາ ແລະເກີດໝາກ
ໃຫ້ແກ່ອິສຣາເອນໄພ່ພົນຂອງເຮົາ ເພາະໃນບໍ່ດົນນີ້ ພວກເຂົາຈະໄດ້ກັບຄືນມາ. [9]ເພາະເບິ່ງ
ແມ, ເຮົາຢູ່ຝ່າຍເຈົ້າ ເຮົາຈະຫັນມາຫາເຈົ້າ ເຈົ້າຈະຖືກໄຖ ແລະຖືກຫວ່ານ. [10]ເຮົາຈະເພີ່ມເຕີມ
ຄົນໃຫ້ແກ່ເຈົ້າ ຄືບັນດາເຊື້ອສາຍຄົນອິສຣາເອນ ທົ່ວທຸກຫົວເມືອງຈະມີຄົນມາອາໃສຢູ່ ແລະ
ສະຖານທີ່ອັນຮ້າງເປົ່າຈະຖືກສ້າງຂຶ້ນມາໃໝ່. [11]ເຮົາຈະເພີ່ມເຕີມທັງຄົນ ແລະສັດໃຫ້ແກ່ເຈົ້າ

ຈະອອກແມ່ແຜ່ລູກ ແລະເຮັດໃຫ້ມີຄົນຢູ່ອາໃສຄືແຕ່ຄາວກ່ອນ ແລະຈະເປັນປະໂຫຍດແກ່ພວກ
ເຈົ້າຫລາຍ ແລ້ວເຈົ້າຈະຮູ້ວ່າ ເຮົາຄືພຣະຜູ້ເປັນເຈົ້າ. 12ເຮົາຈະໃຫ້ຄົນຍ່າງຢູ່ເທິງເຈົ້າ ຄືອິ-
ສຣາເອນໄພ່ພົນຂອງເຮົາດ້ວຍ ແລະພວກເຂົາຈະໄດ້ເຈົ້າເປັນກຳມະສິດ ແລະເຈົ້າກໍຈະກາຍ-
ເປັນມໍລະດົກຂອງພວກເຂົາ ເຈົ້າຈະບໍ່ເອົາລູກຂອງພວກເຂົາໄປອີກ.

13ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ, ເພາະຄົນກ່າວແກ່ເຈົ້າວ່າ ດິນແດນນີ້ກິນຄົນ ແລະໄດ້ເອົາ
ລູກຂອງປະຊາຊາດເຈົ້າໄປ. 14ພຣະເຈົ້າຊົງກ່າວວ່າ, ເພາະສະນັ້ນ ເຈົ້າຈະບໍ່ກິນຄົນ ແລະຈະບໍ່
ເອົາລູກຂອງເຈົ້າອອກຈາກປະຊາຊາດຂອງເຈົ້າໄປອີກເລີຍ. 15ເຮົາຈະບໍ່ໃຫ້ເຈົ້າໄດ້ຍິນຄຳປະ-
ໝາດຂອງປະຊາຊາດຕ່າງໆອີກ ແລະເຈົ້າບໍ່ຕ້ອງທົນຮັບເອົາຄວາມອັບອາຍຂາຍໜ້າຂອງຊາດ
ທັງຫລາຍອີກເລີຍ ແລະບໍ່ຕ້ອງເຮັດໃຫ້ປະຊາຊາດຂອງເຈົ້າສະດຸດອີກເລີຍ. ພຣະເຈົ້າຊົງກ່າວ
ດັ່ງນີ້ແຫລະ.

16ພຣະທຳຂອງພຣະເຈົ້າ ມາເຖິງຂ້າພະເຈົ້າ. 17"ບຸດແຫ່ງມະນຸດເອີຍ ເມື່ອພົງພັນຂອງອິ-
ສຣາເອນໄດ້ມາອາໃສຢູ່ໃນແຜ່ນດິນຂອງຕົນ ພວກເຂົາໄດ້ເຮັດໃຫ້ແຜ່ນດິນເປັນມົນທິນ ດ້ວຍ
ວິທີທາງ ແລະການກະທຳຂອງພວກເຂົາທີ່ມີຕໍ່ເຮົາກໍເໝືອນມົນທິນອັນເກີດຈາກລະດູ. 18ເພາະ-
ສະນັ້ນ ເຮົາຈຶ່ງລະບາຍຄວາມຄຽດຮ້າຍຂອງເຮົາເໜືອພວກເຂົາ ດ້ວຍເລື່ອງໂລຫິດທີ່ພວກເຂົາ
ເຮັດໃຫ້ໄຫລຕົກເທິງແຜ່ນດິນ ແລະເລື່ອງຮູບໂຄລົບທີ່ພວກເຂົາເຮັດໃຫ້ແຜ່ນດິນນັ້ນເປັນມົນທິນ.
19ເຮົາຈຶ່ງເຮັດໃຫ້ພວກເຂົາຕ້ອງພັດພາກຈາກກັນໄປຢູ່ໃນທ່າມກາງປະຊາຊາດຕ່າງໆ ໂດຍໄດ້
ພິພາກສາພວກເຂົາຕາມວິຖີຊີວິດ ແລະການກະທຳຂອງພວກເຂົາເອງ. 20ແຕ່ເມື່ອພວກເຂົາມາ
ຍັງບັນດາປະຊາຊາດ ບໍ່ວ່າພວກເຂົາຈະມາທີ່ໃດກໍຕາມ ພວກເຂົາໄດ້ເຮັດໃຫ້ນາມບໍລິສຸດຂອງ
ເຮົາເສື່ອມເສຍໄປ ຜູ້ຄົນທັງຫລາຍກໍຈະເວົ້າກັນວ່າ, "ຄົນເຫລົ່ານີ້ເປັນປະຊາກອນຂອງພຣະເຈົ້າ
ແຕ່ເປັນຫຍັງຈັ່ງອອກໄປຈາກແຜ່ນດິນຂອງພຣະອົງ?" 21ແຕ່ເຮົາຍັງເປັນຫ່ວງນາມບໍລິສຸດຂອງ
ເຮົາ ຊຶ່ງໄພ່ພົນອິສຣາເອນເຮັດໃຫ້ເສື່ອມເສຍກຽດທ່າມກາງປະຊາຊາດທີ່ພວກເຂົາໄດ້ໄປອາໃສ
ຢູ່ນັ້ນ.

22ພຣະຜູ້ເປັນເຈົ້າຊົງກ່າວຕໍ່ຂ້າພະເຈົ້າວ່າ, "ມະນຸດເອີຍ ຈົ່ງບອກປະຊາຊົນອິສຣາເອນວ່າ
ສິ່ງທີ່ເຮົາກຳລັງຈະເຮັດນີ້ ບໍ່ແມ່ນເຫັນແກ່ຊາວອິສຣາເອນ ແຕ່ເຫັນແກ່ນາມອັນບໍລິສຸດຂອງເຮົາ
ຄື ນາມທີ່ພວກເຈົ້າດູໝິ່ນຢຽບຢາມຄາວຢູ່ໃນຕ່າງປະເທດນັ້ນ. 23ເມື່ອໃດເຮົາສະແດງໃຫ້ຊາດ
ຕ່າງໆ ເຫັນຄວາມບໍລິສຸດແຫ່ງນາມອັນຍິ່ງໃຫຍ່ຂອງເຮົາ ຄື ນາມທີ່ພວກເຈົ້າໄດ້ໝິ່ນປະໝາດ
ໃນທ່າມກາງພວກເຂົາແລ້ວ ເມື່ອນັ້ນແຫລະ ພວກເຂົາຈຶ່ງຮູ້ວ່າ ເຮົາແມ່ນພຣະຜູ້ເປັນເຈົ້າ ເຮົາ
ບອກວ່າຈະເອົາພວກເຈົ້າເປັນຕົວຢ່າງສະແດງໃຫ້ຊາດຕ່າງໆເຫັນວ່າ ເຮົາ ຄືຜູ້ບໍລິສຸດ.

24ຈະເອົາພວກເຈົ້າອອກຈາກຊົນຊາດ ແລະປະເທດຕ່າງໆ ແລ້ວນຳກັບຄືນມາໂຮມກັນຢູ່ໃນ
ປະເທດຂອງເຈົ້າເອງ. 25ຈະເອົານ້ຳບໍລິສຸດຫົດສົງໃຫ້ເຈົ້າພົ້ນຈາກບາບທີ່ຂາບໄຫວ້ຮູບໂຄລົບ
ແລະພົ້ນຈາກທຸກໆ ສິ່ງທີ່ເຮັດໃຫ້ເຈົ້າມີມົນທິນ. 26ຈະໃຫ້ຈິດວິນຍານໃໝ່ແກ່ເຈົ້າ ຈະເອົາໃຈ
ແຂງເໝືອນຫີນຂອງເຈົ້າອອກໄປ ແລະເອົາໃຈຄົນໃສ່ໃຫ້ໃໝ່. 27ເອົາຈິດວິນຍານຂອງເຮົາເອງ
ໃສ່ໃຫ້ເຈົ້າ ເຮັດໃຫ້ເຈົ້າປະພຶດຕາມພຣະທຳ ແລະຂໍ້ຄຳສັ່ງທັງປວງທີ່ເຮົາໄດ້ບອກ. 28ແລ້ວເຈົ້າ

ຈະໄດ້ອາໄສຢູ່ໃນແຜ່ນດິນທີ່ເຮົາໄດ້ມອບໃຫ້ແກ່ບັນພະບູລຸດຂອງເຈົ້າ ເຈົ້າຈະເປັນໄພ່ພົນຂອງ
ເຮົາ ແລະເຮົາຈະເປັນພຣະເຈົ້າຂອງເຈົ້າ. [29]ຈະຊ່ອຍໃຫ້ເຈົ້າພົ້ນຈາກການເປັນມົນທິນຍ້ອນສິ່ງ
ທັງປວງ ຈະສັ່ງໃຫ້ມີເຂົ້າອຸດົມສົມບູນ ເພື່ອເຈົ້າຈະບໍ່ໄດ້ອຶດຢາກອີກຕໍ່ໄປ. [30]ຈະໃຫ້ຕົ້ນໄມ້
ແລະໄຮ່ນາເກີດໝາກຜົນເພີ່ມພູນຂຶ້ນ ເພື່ອວ່າເຈົ້າຈະບໍ່ຖືກຊົນຊາດອື່ນໝິ່ນປະໝາດຍ້ອນການ
ອຶດຢາກອີກ. [31]ແລ້ວເຈົ້າຈະຮູ້ເມື່ອຄວາມຊົ່ວ ແລະຄວາມຜິດທີ່ຕົນໄດ້ເຮັດມາ ຈະກຽດຊັງຕົວ
ເອງຍ້ອນຄວາມບາບ ແລະຄວາມບໍ່ຍຸດຕິທຳນັ້ນ. [32]ອິສຣາເອນເອີຍ ເຮົາຢາກໃຫ້ເຈົ້າຮູ້ວ່າ ເຮົາ
ຈະບໍ່ເຮັດສິ່ງທັງປວງນີ້ຍ້ອນເຫັນແກ່ເຈົ້າ ເພາະວ່າຢາກໃຫ້ເຈົ້າຮູ້ສຶກລະອາຍໃຈໃນການກະທຳ
ນັ້ນ ເຮົາຄືພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ແຫລະ.

[33]ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ເມື່ອເຮົາຊຳລະບາບໃຫ້ໝົດໄປຈາກເຈົ້າແລ້ວ ຈະໃຫ້ເຈົ້າ
ອາໄສຢູ່ໃນຫົວເມືອງທັງຫລາຍອີກ ແລະຈະໃຫ້ສ້າງສາສິ່ງທີ່ເພພັງຂຶ້ນໃໝ່. [34]ທົ່ງນາຂອງເຈົ້າທີ່
ທຸກຄົນເຄີຍເຫັນມັນມີຫຍ້າ ແລະເປັນປ່ານັ້ນ ເຮົາຈະໃຫ້ເຈົ້າຂຸດໄຖມັນອີກ. [35]ຄົນທັງປວງຈະ
ເວົ້າເຖິງດິນຕອນນີ້ວ່າ ແຕ່ກີ້ມັນເປັນປ່າ ແຕ່ດຽວນີ້ມັນເປັນເໝືອນສວນເອເດັນ ແຕ່ກ່ອນຫົວ
ເມືອງທັງຫລາຍໄດ້ເພພັງຮ້າງເປົ່າ ແລະຖືກທຳລາຍ ແຕ່ບັດນີ້ໄດ້ມີກຳແພງ ແລະມີຄົນອາໄສຢູ່.
[36]ແລ້ວຊົນຊາດໃກ້ຄຽງທີ່ຍັງມີຊີວິດເຫລືອຢູ່ຈະຮູ້ວ່າ ເຮົານີ້ແຫລະ ເປັນຜູ້ສ້າງຫົວເມືອງທີ່ເພພັງ
ແລະປູກພືດໃສ່ດິນຮົກຮ້າງເຫລົ່ານີ້ ເຮົາຈະເຮັດຕາມທີ່ໄດ້ກ່າວມານີ້ແທ້.”

[37]ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ເຮົາຈະເຮັດຫລາຍກວ່ານັ້ນອີກ ຄືຈະໃຫ້ຊາວອິສຣາເອນຂໍ
ຄວາມຊ່ອຍເຫລືອຈາກເຮົາ ເພື່ອເຮັດໃຫ້ພວກເຂົາມີຄົນຫລວງຫລາຍເໝືອນດັ່ງຝູງແກະ ຄືແຕ່
ກ່ອນນັ້ນ. [38]ຝູງແກະເຜົາບູຊາໃນວັນເທດສະການຢູ່ກຸງເຢຣູຊາເລັມມີຫລາຍສັນໃດ ຝູງຄົນໃນ
ເມືອງຮ້າງເປົ່າເຫລົ່ານີ້ ກໍຈະຫລາຍສັນນັ້ນ ແລ້ວພວກເຂົາທັງຫລາຍຈະຮູ້ວ່າ ເຮົາ ຄືພຣະຜູ້-
ເປັນເຈົ້າ.”

# ບົດທີ 37

## ຮ່ອມພູກະດູກຫລ້ອນ

[1]ຂ້າພະເຈົ້າໄດ້ຕົກຢູ່ພາຍໃຕ້ລິດເດດຂອງພຣະຜູ້ເປັນເຈົ້າ ພຣະວິນຍານຂອງພຣະອົງຊົງນຳ
ຂ້າພະເຈົ້າອອກມາປ່ອຍໄວ້ໃນຮ່ອມພູແຫ່ງໜຶ່ງ ຊຶ່ງມີກະດູກເຕັມໄປໝົດ. [2]ຊົງນຳໄປທົ່ວບໍລິເວນ
ຮ່ອມພູນັ້ນ ຂ້າພະເຈົ້າໄດ້ເຫັນກະດູກຢ່າງຫລວງຫລາຍຢູ່ໃນທີ່ນັ້ນ ເປັນກະດູກຫລ້ອນທັງໝົດ.
[3]ພຣະອົງຊົງຖາມຂ້າພະເຈົ້າວ່າ, “ບຸດແຫ່ງມະນຸດເອີຍ ກະດູກເຫລົ່ານີ້ຄືນມີຊີວິດອີກບໍ່ໄດ້
ບໍ?”ຂ້າພະເຈົ້າທູນຕອບວ່າ, “ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງເທົ່ານັ້ນທີ່ຊົງຮູ້ເລື່ອງນີ້.” [4]ແລ້ວ
ພຣະອົງຊົງກ່າວວ່າ, “ຈົ່ງປະກາດພຣະທຳຕໍ່ກະດູກຫລ້ອນເຫລົ່ານີ້ ຈົ່ງບອກພວກມັນຟັງພຣະທຳ
ຂອງພຣະຜູ້ເປັນເຈົ້າ. [5]ວ່າເຮົາຈະເອົາລົມຫາຍໃຈເຂົ້າໄປໃນພວກມັນ ຈະໃຫ້ມີຊີວິດ. [6]ມີເສັ້ນ
ເອັນ ມີກ້າມຊີ້ນ ແລະມີໜັງປົກຫຸ້ມອີກ ແລ້ວພວກມັນຈະຮູ້ວ່າ ເຮົາ ຄືພຣະຜູ້ເປັນເຈົ້າ.”

[7]ດັ່ງນັ້ນ ຂ້າພະເຈົ້າຈຶ່ງປະກາດພຣະທຳຕາມທີ່ພຣະອົງຊົງບອກ ໃນຂະນະທີ່ປ່າວປະກາດຢູ່
ນັ້ນ ຂ້າພະເຈົ້າໄດ້ຍິນສຽງດັງກຸກກຶກ ແລ້ວກະດູກທັງຫລາຍກໍເລີ່ມເຊື່ອມເຂົ້າກັນ. [8]ໃນຂະນະທີ່

ເຝົ້າເບິ່ງຢູ່ນັ້ນ ພວກເສັ້ນເອັນ ແລະກ້າມຊີ້ນໄດ້ຕິດກັບກະດູກ ແລະມີໜັງຫຸ້ມຢູ່ຂ້າງນອກແຕ່ຍັງ
ບໍ່ທັນມີລົມຫາຍໃຈເທື່ອ.

9ພຣະເຈົ້າຊົງກ່າວຕໍ່ຂ້າພະເຈົ້າວ່າ, "ບຸດແຫ່ງມະນຸດເອີຍ ຈົ່ງປະກາດພຣະທຳໃຫ້ລົມຟັງ ໃຫ້
ບອກວ່າ ພຣະຜູ້ເປັນເຈົ້າຊົງສັ່ງໃຫ້ມັນມາຈາກທຸກທາງ ແລ້ວໃຫ້ເຂົ້າໄປເປັນລົມຫາຍໃຈຢູ່ໃນ
ຊາກສົບເຫລົ່ານັ້ນ ເພື່ອໃຫ້ພວກເຂົາເລີ່ມມີຊີວິດຄືນມາໃໝ່ອີກ." 10ດັ່ງນັ້ນ ຂ້າພະເຈົ້າຈຶ່ງປະ-
ກາດພຣະທຳຕາມທີ່ພຣະອົງຊົງບອກ ລົມກໍເຂົ້າໄປສູ່ຊາກສົບ ແລະເຮັດໃຫ້ມີລົມຫາຍໃຈຄືນມີ
ຊີວິດອີກ ພວກເຂົາຈຶ່ງໄດ້ພ້ອມກັນຍືນຂຶ້ນ ເປັນຄົນຫລວງຫລາຍພໍທີ່ຈະປະກອບເປັນກອງທັບ
ໜຶ່ງໄດ້.

11ພຣະເຈົ້າຊົງບອກຂ້າພະເຈົ້າວ່າ, "ບຸດແຫ່ງມະນຸດເອີຍ ຄົນອິສຣາເອນເປັນເໝືອນກະດູກ
ເຫລົ່ານີ້ແຫລະ ພວກເຂົາເວົ້າວ່າ ຕົນເອງຫ່ຽວແຫ້ງປາດສະຈາກຄວາມຫວັງ ແລະບໍ່ມີອະນາ-
ຄົດ. 12ດ້ວຍເຫດນັ້ນ ຈົ່ງປະກາດພຣະທຳຕໍ່ອິສຣາເອນໄພ່ພົນຂອງເຮົາວ່າ ເຮົາຈະໄຂຂຸມຝັງ
ສົບເອົາພວກເຂົາອອກ ແລ້ວນຳຄືນໄປຍັງແຜ່ນດິນອິສຣາເອນ. 13ເມື່ອໄຂຂຸມຝັງສົບນຳພວກ
ເຂົາອອກແລ້ວ ພວກເຂົາຈຶ່ງຈະຮູ້ວ່າ ເຮົາ ຄືພຣະຜູ້ເປັນເຈົ້າ. 14ເຮົາຈະເປົ່າລົມເຂົ້າໄປໃນພວກ
ເຂົາ ເພື່ອໃຫ້ມີລົມຫາຍໃຈ ແລະມີຊີວິດຄືນມາອີກ ແລະຈະໃຫ້ພວກເຂົາອາໄສຢູ່ໃນແຜ່ນດິນ
ຂອງຕົນເອງ ແລ້ວພວກເຂົາຈະຮູ້ວ່າ ເຮົາ ຄືພຣະຜູ້ເປັນເຈົ້າ ເຮົາຈະເຮັດຕາມທີ່ໄດ້ກ່າວມານີ້
ແຫລະ."

## ຢູດາ ແລະອິສຣາເອນຈະເປັນລາຊະອານາຈັກດຽວ

15-16ພຣະຜູ້ເປັນເຈົ້າຊົງບອກຂ້າພະເຈົ້າວ່າ, "ບຸດແຫ່ງມະນຸດເອີຍ ໃຫ້ເອົາໄມ້ລຳໜຶ່ງມາ
ແລ້ວຂຽນໃສ່ວ່າ ລາຊະອານາຈັກຢູດາ ແລ້ວເອົາໄມ້ອີກລຳໜຶ່ງແລ້ວຂຽນໃສ່ວ່າ ລາຊະອານາ-
ຈັກອິສຣາເອນ. 17ແລ້ວໃຫ້ກຳໄມ້ທັງສອງນັ້ນໄວ້ໃນມືເພື່ອໃຫ້ເປັນໄມ້ລຳດຽວກັນ. 18ເມື່ອຊົນ
ຊາດຂອງເຈົ້າຖາມຫາຄວາມໝາຍທີ່ເຮັດນັ້ນ. 19ໃຫ້ເຈົ້າບອກວ່າ ເຮົາຈະເອົາໄມ້ລຳທີ່ຊື່ວ່າ ເອ-
ຟຣາຢິມ ຕິດໄວ້ກັບລຳທີ່ຊື່ວ່າ ຢູດາ ຈະເຮັດໃຫ້ໄມ້ສອງລຳນີ້ເປັນອັນໜຶ່ງອັນດຽວກັນ ແລະຈະ
ຖືມັນໄວ້ໃນມືຂອງເຮົາ. 20ຕໍ່ໄປ ຈົ່ງຖືເອົາໄມ້ສອງລຳທີ່ເຈົ້າຂຽນໃສ່ນັ້ນໃຫ້ຄົນທັງຫລາຍເບິ່ງ
ແລ້ວບອກພວກເຂົາວ່າ, 21ພຣະຜູ້ເປັນເຈົ້າຈະເອົາອິສຣາເອນອອກຈາກຊົນຊາດທີ່ພວກເຂົາ
ອາໄສຢູ່ ຈະເຕົ້າໂຮມພວກເຂົາຄືນມາຢູ່ແຜ່ນດິນຂອງເຂົາເອງ. 22ຈະເຮັດໃຫ້ເປັນຊົນຊາດດຽວ
ຢູ່ໃນພູທັງຫລາຍຂອງອິສຣາເອນ ຈະມີກະສັດອົງໜຶ່ງຊົງເປັນປະມຸກ ແລະຈະບໍ່ຖືກແບ່ງອອກ
ເປັນສອງຊາດ ຫລືສອງອານາຈັກອີກຕໍ່ໄປ. 23ພວກເຂົາຈະບໍ່ມີມົນທິນຍ້ອນຂາບໄຫວ້ຮູບເຄົາ-
ລົບ ຫລືການເຮັດບາບອີກ ເຮົາຈະຊ່ອຍໃຫ້ພວກເຂົາພົ້ນຈາກການເຮັດຊົ່ວ ແລະທໍລະຍົດຕໍ່ເຮົາ
ຈະເຮັດໃຫ້ສະອາດບໍລິສຸດ ພວກເຂົາຈະເປັນໄພ່ພົນຂອງເຮົາ ແລະເຮົາກໍຈະເປັນພຣະເຈົ້າຂອງ
ພວກເຂົາ.

24ດາວິດ ຜູ້ຮັບໃຊ້ຂອງເຮົາຈະເປັນກະສັດຂອງພວກເຂົາ ພວກເຂົາທັງໝົດຈະມີຜູ້ປົກຄອງຜູ້
ດຽວ ແລະຈະປະພຶດຕາມພຣະໄທຂອງເຮົາດ້ວຍຄວາມສັດຊື່. 25ພວກເຂົາຈະອາໄສຢູ່ໃນແຜ່ນ-
ດິນທີ່ເຮົາໄດ້ມອບໃຫ້ຢາໂຄບ ຜູ້ຮັບໃຊ້ຂອງເຮົາ ຄືແຜ່ນດິນທີ່ບັນພະບູລຸດຂອງພວກເຂົາໄດ້

ອາໄສຢູ່ນັ້ນ ພວກເຂົາພ້ອມທັງລູກຫລານທັງໝົດຈະຢູ່ທີ່ນັ້ນຕະຫລອດໄປ ດາວິດຜູ້ຮັບໃຊ້ຂອງ
ເຮົາກໍຈະປົກຄອງພວກເຂົາຕະຫລອດໄປ. 26ຈະໃຫ້ຄຳໝັ້ນສັນຍາກັບພວກເຂົາໃຫ້ໄດ້ຢູ່ຢ່າງສະ-
ຫງົບສຸກຕະຫລອດໄປ ຈະເພີ່ມພົນລະເມືອງ ແລະເຮັດໃຫ້ພຣະວິນຍານມີຢູ່ໃນແຜ່ນດິນຂອງ
ພວກເຂົາຕະຫລອດໄປ. 27ເຮົາຈະຢູ່ທີ່ນັ້ນນຳພວກເຂົາ ຈະເປັນພຣະເຈົ້າຂອງພວກເຂົາ ແລະ
ພວກເຂົາກໍຈະເປັນໄພ່ພົນຂອງເຮົາ. 28ເມື່ອເຮົາເຮັດໃຫ້ພຣະວິຫານຂອງເຮົາມີຢູ່ໃນປະເທດຂອງ
ພວກເຂົາແລ້ວ ຊົນຊາດທັງຫລາຍຈຶ່ງຈະຮູ້ວ່າ ເຮົາ ຄືພຣະຜູ້ເປັນເຈົ້າ ຜູ້ເຮັດໃຫ້ອິສຣາເອນ
ເປັນຊົນຊາດພິເສດຂອງເຮົາ."

# ບົດທີ 38

## ໂຄກ ແລະມາໂຄກຈະມາສູ້ຮົບກັບອິສຣາເອນ

1ພຣະທຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າວ່າ 2"ບຸດແຫ່ງມະນຸດເອີຍ ຈົ່ງມຸ່ງໜ້າຂອງ
ເຈົ້າຕໍ່ສູ້ໂຄກແຫ່ງແຜ່ນດິນມາໂຄກ ເຈົ້າອົງສຳຄັນຂອງເມເຊັກ ແລະຕູບານ ແລະຈົ່ງປະກາດ
ພຣະທຳກ່າວໂທດພວກເຂົາ 3ຈົ່ງກ່າວວ່າ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ ເບິ່ງແມ
ໂຄກເອີຍ ເຮົາເປັນສັດຕູກັບເຈົ້າ ຜູ້ເປັນເຈົ້າອົງສຳຄັນແຫ່ງເມເຊັກ ແລະຕູບານ 4ເຮົາຈະໃຫ້
ເຈົ້າຖອຍຫລັງກັບ ແລະເອົາເບັດເກາະຄາງກະໄຕຂອງເຈົ້າ ແລະເຮົາຈະນຳເຈົ້າອອກມາພ້ອມ
ທັງກອງທັບທັງໝົດຂອງເຈົ້າ ທັງມ້າ ແລະທະຫານມ້າ ສຸບເຄື່ອງຮົບຄົບທຸກຄົນ ເປັນກອງທັບ
ໃຫຍ່ ມີສາຍຮັດ ແລະໂລ່ ຖືດາບທຸກຄົນ 5ເປີເຊຍ ກູເຊ ແລະປຸດ ຢູ່ກັບພວກເຂົາດ້ວຍ ທຸກ
ຄົນມີໂລ່ ແລະໝວກເຫລັກ 6ໂກເມ ແລະກອງທັບທັງໝົດຂອງພວກເຂົາ ເຊື້ອສາຍໂຕກາມາ
ຈາກທາງເໜືອສຸດ ພ້ອມກັບກອງທັບທັງໝົດຂອງພວກເຂົາ ມີຊົນຊາດທັງຫລາຍຢູ່ກັບເຈົ້າ

7ເຈົ້າ ແລະບັນດາກອງທັບຊຶ່ງປະຊຸມຢູ່ກັບເຈົ້າ ຈົ່ງຕຽມຕົວພ້ອມ ແລະໃຫ້ພ້ອມໄວ້ສະເໝີ
ຈົ່ງເປັນຍາມເຝົ້າພວກເຂົາທັງຫລາຍ 8ເມື່ອລ່ວງໄປຫລາຍມື້ແລ້ວ ເຈົ້າຈະຕ້ອງຖືກເອີ້ນຕົວ ໃນ
ປີຫລັງໆ ເຈົ້າຈະຍົກເຂົ້າໄປຕໍ່ສູ້ກັບແຜ່ນດິນຊຶ່ງໄດ້ຄືນມາຈາກດາບ ເປັນແຜ່ນດິນທີ່ປະຊາຊົນ
ຮວບຮວມກັນມາຈາກຊົນຊາດຫລາຍຊາດຢູ່ທີ່ເທິງພູເຂົາອິສຣາເອນ ຊຶ່ງເຄີຍເປັນບ່ອນຮ້າງເປົ່າ
ຢູ່ຕະຫລອດໄປເປັນນິດ ປະຊາຊົນຂອງແຜ່ນດິນນັ້ນອອກມາຈາກຊົນຊາດອື່ນໆ ບັດນີ້ ອາໄສຢູ່
ຢ່າງປອດໄພແລ້ວ 9ເຈົ້າຈະລຸກອອກໄປ ມາເໝືອນພາຍຸ ເຈົ້າຈະເປັນເໝືອນເມກປົກຄຸມແຜ່ນ-
ດິນ ທັງເຈົ້າ ແລະກອງທັບທັງໝົດຂອງເຈົ້າ ແລະຊົນຊາດທັງຫລາຍທີ່ຢູ່ກັບເຈົ້າ

10ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ ຕໍ່ມາໃນເວລານັ້ນ ຈະບັງເກີດຄວາມຄິດໃນໃຈ
ຂອງເຈົ້າ ແລະເຈົ້າຈະຄິດແຜນການຊົ່ວ 11ແລະຈະກ່າວວ່າ 'ເຮົາຈະຍົກກອງທັບໄປຍັງແຜ່ນ-
ດິນທີ່ຊົນນະບົດບໍ່ມີກຳແພງອ້ອມ ເຮົາຈະໂຈມຕີປະຊາຊົນທີ່ສະຫງົບ ຊຶ່ງອາໄສຢູ່ຢ່າງປອດໄພ
ທຸກຄົນອາໄສຢູ່ໂດຍບໍ່ມີກຳແພງ ບໍ່ມີສິ່ງກີດຂວາງ ບໍ່ມີປະຕູ' 12ເພື່ອຈະຍາດຊິງເອົາເຄື່ອງຂອງ
ປຸ້ນເອົາໄປ ເພື່ອຈະເຂົ້າຍຶດບ່ອນທີ່ຖິ້ມໃຫ້ຮ້າງເປົ່າ ຊຶ່ງຂະນະນີ້ມີຄົນອາໄສຢູ່ ແລະປະຊາຊົນ
ຊຶ່ງຮວບຮວມຈາກບັນດາປະຊາຊາດ ຜູ້ທີ່ໄດ້ສັດ ແລະສິ່ງຂອງຄືຜູ້ອາໄສຢູ່ໃນທ່າມກາງແຜ່ນດິນ
13ເຊບາ ເດດານ ແລະບັນດາພໍ່ຄ້າແຫ່ງຕາຊິດ ແລະໂຕສິງໜຸ່ມທັງຫລາຍໃນເມືອງນັ້ນຈະກ່າວ

ແກ່ເຈົ້າວ່າ 'ທ່ານມາເພື່ອຈະຍາດຊີງເອົາເຄື່ອງຂອງບໍ ທ່ານຊຸມນຸມກອງທັບເພື່ອຈະປຸ້ນ ເພື່ອ
ຈະຂົນເອົາເງິນ ແລະຄຳໄປ ຂົນເອົາສັດ ແລະສິ່ງຂອງໄປ ເພື່ອຈະຍາດຊີງຂອງຢ່າງຫລວງ-
ຫລາຍບໍ'

[14]ເພາະສະນັ້ນ ບຸດແຫ່ງມະນຸດເອີຍ ຈົ່ງປະກາດພຣະທຳ ແລະກ່າວກັບໂຄກວ່າ ອົງພຣະ-
ຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ ໃນມື້ນັ້ນ ເມື່ອອິສຣາເອນປະຊາຊົນຂອງເຮົາອາໄສຢູ່ຢ່າງ
ປອດໄພແລ້ວ ເຈົ້າຈະບໍ່ໄດ້ຮູ້ບໍ [15]ເຈົ້າຈະມາຈາກບ່ອນຂອງເຈົ້າຊຶ່ງຢູ່ທາງເໜືອສຸດ ທັງເຈົ້າ
ແລະຊົນຊາດທັງຫລາຍທີ່ຢູ່ກັບເຈົ້າ ທຸກຄົນຂີ່ມ້າເປັນກອງທັບໃຫຍ່ ເປັນກອງທັບທີ່ມີກຳລັງ
ຫລາຍ [16]ເຈົ້າຈະມາຕໍ່ສູ້ອິສຣາເອນປະຊາຊົນຂອງເຮົາ ເໝືອນຢ່າງເມກປົກຄຸມແຜ່ນດິນ ເຮົາ
ຈະນຳເຈົ້າມາຕໍ່ສູ້ກັບແຜ່ນດິນຂອງເຮົາ ເພື່ອປະຊາຊາດທັງຫລາຍຈະຮູ້ຈັກເຮົາ ໂຄກເອີຍ ເມື່ອ
ເຮົາໄດ້ສະແດງຄວາມບໍລິສຸດຂອງເຮົາທ່າມກາງເຈົ້າຕໍ່ໜ້າຕໍ່ຕາພວກເຂົາ

## ພຣະເຈົ້າຈະຊົງຊະນະເໜືອໂຄກ

[17]ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ ເຈົ້າເປັນຜູ້ນັ້ນ ຫລືຜູ້ທີ່ສະໄໝກ່ອນເຮົາໄດ້ເວົ້າ
ເຖິງ ໂດຍຜູ້ປະກາດພຣະທຳຂອງອິສຣາເອນ ຜູ້ຮັບໃຊ້ຂອງເຮົາ ຜູ້ຊຶ່ງໃນສະໄໝນັ້ນໄດ້ປະ-
ກາດພຣະທຳຢູ່ຫລາຍປີວ່າ ເຮົາຈະນຳເຈົ້າມາຕໍ່ສູ້ກັບພວກເຂົາ [18]ອົງພຣະຜູ້ເປັນເຈົ້າພຣະເຈົ້າ
ກ່າວວ່າ ແຕ່ຕໍ່ມາໃນເວລານັ້ນ ເມື່ອໂຄກຈະຍົກມາຕໍ່ສູ້ກັບແຜ່ນດິນອິສຣາເອນ ຄວາມພິໂລດ
ຂອງເຮົາຈະພຸ່ງຂຶ້ນຕໍ່ໜ້າເຮົາ [19]ເພາະເຮົາຂໍປະກາດດ້ວຍຄວາມຫວງແຫນ ແລະດ້ວຍຄວາມພິ-
ໂລດດັ່ງແປວໄຟຂອງເຮົາວ່າ ໃນມື້ນັ້ນຈະມີການສັ່ນສະເທືອນອັນໃຫຍ່ໃນແຜ່ນດິນອິສຣາເອນ
[20]ປາທີ່ທະເລ ນົກໃນອາກາດ ສັດປ່າທົ່ງ ແລະບັນດາສັດເລືອຄານທີ່ຄານຢູ່ເທິງແຜ່ນດິນ ແລະ
ປະຊາຊົນທັງໝົດທີ່ຢູ່ເທິງພື້ນໂລກຈະສັ່ນສະເທືອນຕໍ່ໜ້າເຮົາ ພູເຂົາຈະພັງທະລາຍລົງ ໜ້າຜາ
ຈະພັງ ແລະກຳແພງທຸກແຫ່ງຈະລົ້ມລົງດິນ [21]ເຮົາຈະຮ້ອງຫາພູເຂົາທັງຫລາຍຂອງເຮົາ ເອີ້ນ
ດາບມາຕໍ່ສູ້ກັບໂກກ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ແຫລະ ແລະດາບຂອງທຸກຄົນຈະ
ຕໍ່ສູ້ກັບພີ່ນ້ອງຂອງພວກເຂົາ [22]ເຮົາຈະພິພາກສາລົງໂທດພວກເຂົາດ້ວຍພະຍາດລະບາດແລະ
ເລືອດຕົກ ເຮົາຈະໃຫ້ຝົນຕົກນໍ້າໄຫລແຮງ ທັງມີໝາກເຫັບ ແລະໄຟກັບມາດຕົກໃສ່ກອງທັບ
ຂອງພວກເຂົາ ແລະຊົນຊາດທັງຫລາຍຂອງພວກເຂົາທີ່ຢູ່ກັບເຂົາ [23]ເຮົາຈະສະແດງຄວາມຍິ່ງ
ໃຫຍ່ ແລະຄວາມບໍລິສຸດຂອງເຮົາ ທັງຈະເຮັດຕົວເຮົາໃຫ້ເປັນທີ່ຮູ້ຈັກໃນສາຍຕາ ຂອງປະຊາ-
ຊາດ ແລ້ວພວກເຂົາຈະຮູ້ວ່າເຮົາແມ່ນພຣະຜູ້ເປັນເຈົ້າ

# ບົດທີ 39

[1]"ບຸດແຫ່ງມະນຸດເອີຍ ຈົ່ງປະກາດພຣະທຳກ່າວໂທດໂຄກ ແລະກ່າວວ່າ ພຣະເຈົ້າກ່າວ
ດັ່ງນີ້ວ່າ ເບິ່ງແມ ໂຄກເອີຍ ເຮົາເປັນສັດຕູກັບເຈົ້າ ຜູ້ເປັນເຈົ້າອົງສຳຄັນແຫ່ງເມເຊັກ ແລະຕູ-
ບານ [2]ເຮົາຈະໃຫ້ເຈົ້າຖອຍຫລັງກັບ ແລະເຈົ້າຈະເຫລືອພຽງໜຶ່ງໃນຫົກສ່ວນ ແລະໃຫ້ເຈົ້າຂຶ້ນ
ມາຈາກທາງເໜືອທີ່ສຸດ ແລະໃຫ້ເຈົ້າເຂົ້າໄປຕໍ່ສູ້ພູເຂົາທັງຫລາຍແຫ່ງອິສຣາເອນ [3]ແລ້ວເຮົາຈະ
ຕີຄັນທະນູໃຫ້ຫລຸດຈາກມືຊ້າຍຂອງເຈົ້າ ແລະເຮົາຈະໃຫ້ລູກທະນູຕົກຈາກມືຂວາຂອງເຈົ້າ [4]ເຈົ້າ

ຈະລົ້ມລົງເທິງພູເຂົາແຫ່ງອິສຣາເອນ ທັງເຈົ້າ ແລະກອງທັບທັງໝົດຂອງເຈົ້າ ແລະຊົນຊາດ
ທັງຫລາຍທີ່ຢູ່ກັບເຈົ້າ ເຮົາຈະມອບເຈົ້າໃຫ້ເປັນອາຫານແກ່ນົກທຸກຊະນິດ ແລະແກ່ສັດປ່າ 5ອົງ
ພຣະຜູ້ເປັນເຈົ້າພຣະເຈົ້າກ່າວວ່າ ເຈົ້າຈະລົ້ມລົງເທິງພື້ນດິນ ເພາະເຮົາໄດ້ລັ່ນຄຳເວົ້າແລ້ວ
6ເຮົາຈະສົ່ງແປວໄຟມາເໜືອມາໂກກ ແລະທ່າມກາງຜູ້ທີ່ອາໄສຢູ່ຢ່າງປອດໄພຕາມເກາະຕ່າງໆ
ແລະພວກເຂົາທັງຫລາຍຈະຮູ້ວ່າເຮົາແມ່ນພຣະຜູ້ເປັນເຈົ້າ

7ແລະເຮົາຈະເຮັດໃຫ້ນາມບໍລິສຸດຂອງເຮົາເປັນທີ່ຮູ້ຈັກໃນທ່າມກາງອິສຣາເອນປະຊາຊົນ
ຂອງເຮົາ ເຮົາຈະບໍ່ຍອມໃຫ້ອິສຣາເອນເຮັດໃຫ້ນາມບໍລິສຸດຂອງເຮົາສະທ້ານອີກຕໍ່ໄປ ແລະ
ປະຊາຊາດທັງຫລາຍຈະຮູ້ວ່າ ເຮົາແມ່ນພຣະຜູ້ເປັນເຈົ້າ ອົງບໍລິສຸດໃນອິສຣາເອນ 8ອົງພຣະ-
ຜູ້ເປັນເຈົ້າພຣະເຈົ້າກ່າວວ່າ ເບິ່ງແມ ມາແລ້ວ ແລະຈະເປັນຢ່າງນັ້ນ ຄືວັນນັ້ນຊຶ່ງເຮົາໄດ້ລັ່ນ
ຄຳເວົ້າໄວ້

9ແລ້ວຄົນເຫລົ່ານັ້ນທີ່ອາໄສຢູ່ໃນບັນດາຫົວເມືອງອິສຣາເອນຈະອອກໄປ ແລະຈະເອົາໄຟສຸມ
ໃສ່ເຄື່ອງອາວຸດຄືໂລ່ ສາຍຮັດ ຄັນທະນູ ແລະລູກທະນູ ຫອກຍາວ ແລະໄມ້ຄ້ອນ ພວກເຂົາ
ຈະເອົາໄຟສຸມເປັນເວລາເຈັດປີ 10ເພາະສະນັ້ນ ພວກເຂົາບໍ່ຈຳເປັນຈະຕ້ອງເອົາຟືນມາຈາກທົ່ງ
ນາ ຫລືຕັດຟືນມາຈາກປ່າ ເພາະພວກເຂົາຈະກໍ່ໄຟດ້ວຍເຄື່ອງອາວຸດ ແລະພວກເຂົາທັງຫລາຍ
ຈະຍາດຊິງເອົາຜູ້ທີ່ຍາດຊິງພວກເຂົາ ແລະຈະປຸ້ນຜູ້ທີ່ປຸ້ນພວກເຂົາ ອົງພຣະຜູ້ເປັນເຈົ້າພຣະ-
ເຈົ້າກ່າວດັ່ງນີ້ແຫລະ

11ຕໍ່ມາໃນມື້ນັ້ນ ເຮົາຈະໃຫ້ໂຄກມີຂຸມຝັງສົບຢູ່ໃນອິສຣາເອນ ຄືພູເຂົາຂອງຄົນຍ່າງຜ່ານໄປ
ມາ ຊຶ່ງຢູ່ທາງທິດຕາເວັນອອກຂອງທະເລ ມັນຈະປິດດັງຂອງຄົນຍ່າງຜ່ານໄປມາ ເພາະວ່າ
ໂຄກ ແລະປະຊາຊົນທັງໝົດຂອງເຈົ້າຈະຖືກຝັງໄວ້ບ່ອນນັ້ນ ພວກເຂົາຈະເອີ້ນກັນວ່າ ພູເຂົາ
ຮາໂມນ-ໂຄກ 12ເຊື້ອສາຍອິສຣາເອນຈະຝັງ ພວກເຂົາທັງຫລາຍຢູ່ເຖິງເຈັດເດືອນ ເພື່ອຈະ
ເຮັດໃຫ້ແຜ່ນດິນນັ້ນສະອາດ 13ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວວ່າ ປະຊາຊົນທຸກຄົນແຫ່ງ
ແຜ່ນດິນຈະຝັງພວກເຂົາ ໃນມື້ນັ້ນ ເມື່ອເຮົາສະແດງສະຫງ່າລາສີຂອງເຮົາ ປະຊາຊົນຈະໄດ້ຮັບ
ກຽດເພາະການຝັງສົບນັ້ນ 14ພວກເຂົາທັງຫລາຍຈະຕັ້ງຄົນໃຫ້ຍ່າງຜ່ານໄປມາໃນແຜ່ນດິນ
ເລື້ອຍໆ ໃຫ້ຝັງສົບຄົນເຫລົ່ານັ້ນທີ່ເຫລືອຢູ່ເທິງພື້ນແຜ່ນດິນ ເພື່ອຈະເຮັດໃຫ້ແຜ່ນດິນສະອາດ
ພວກເຂົາຈະອອກກວດຄົ້ນເມື່ອສິ້ນສຸດເຈັດເດືອນແລ້ວ 15ເມື່ອຄົນເຫລົ່ານັ້ນຜ່ານໄປມາໃນແຜ່ນ-
ດິນ ຖ້າໃຜເຫັນກະດູກຄົນ ພວກເຂົາຈະເອົາເຄື່ອງໝາຍປັກໄວ້ຂ້າງກະດູກນັ້ນ ຈົນກວ່າຄົນຝັງ
ຈະມາຝັງພວກເຂົາໄວ້ໃນພູເຂົາຮາໂມນ-ໂຄກ 16ຫົວເມືອງໜຶ່ງຊື່ ຮາໂມນາ ກໍຢູ່ບ່ອນນັ້ນດ້ວຍ
ພວກເຂົາຈະເຮັດໃຫ້ແຜ່ນດິນສະອາດດັ່ງນີ້ແຫລະ

17ບຸດແຫ່ງມະນຸດເອີຍ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ ຈົ່ງເວົ້າກັບນົກທຸກຊະນິດ
ແລະເວົ້າກັບເຫລົ່າສັດປ່າວ່າ 'ຈົ່ງຊຸມນຸມ ແລະມາເຕົ້າ ລວມກັນມາຈາກທຸກດ້ານ ມາຍັງງານ
ລ້ຽງການບູຊາ ຊຶ່ງເຮົາຖວາຍເພື່ອເຈົ້າ ເປັນງານລ້ຽງການບູຊາໃຫຍ່ເທິງພູເຂົາທັງຫລາຍແຫ່ງ
ອິສຣາເອນ ເຈົ້າຈະຮັບປະທານຊີ້ນແລະດື່ມເລືອດ 18ເຈົ້າຈະຮັບປະທານຊີ້ນຂອງຜູ້ກ້າຫານ
ແລະດື່ມເລືອດຂອງເຈົ້ານາຍແຫ່ງໂລກ ຂອງແກະຜູ້ ຂອງລູກແກະ ແລະຂອງແບ້ກັບຂອງງົວ-

ເຖິກ ທັງໝົດນີ້ເປັນສັດອ້ວນພີແຫ່ງເມືອງບາຊານ [19]ແລະເຈົ້າຈະຮັບປະທານໄຂມັນຈົນເຈົ້າອີ່ມ
ແລະດື່ມເລືອດຈົນເຈົ້າເມົາໃນງານລ້ຽງບູຊາຊຶ່ງເຮົາໄດ້ຖວາຍເພື່ອເຈົ້າ [20]ແລະເຈົ້າຈະອີ່ມທີ່ໂຕະ
ຂອງເຮົາດ້ວຍຊີ້ນມ້າ ແລະຜູ້ຂີ່ ທັງຊີ້ນຂອງຜູ້ກ້າຫານ ແລະຂອງນັກຮົບທຸກຊະນິດ' ອົງພຣະ-
ຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ແຫລະ

[21]ເຮົາຈະຕັ້ງສະຫງ່າລາສີຂອງເຮົາໄວ້ໃນໝູ່ປະຊາຊາດທັງຫລາຍ ແລະປະຊາຊາດທັງໝົດ
ຈະເຫັນການພິພາກສາລົງໂທດຂອງເຮົາ ຊຶ່ງເຮົາໄດ້ເຮັດ ແລະເຫັນມືຂອງເຮົາຊຶ່ງເຮົາວາງໄວ້
ເທິງພວກເຂົາທັງຫລາຍ [22]ຕັ້ງແຕ່ມື້ນັ້ນເປັນຕົ້ນໄປ ເຊື້ອສາຍອິສຣາເອນຈະຮູ້ວ່າ ເຮົາແມ່ນ
ພຣະຜູ້ເປັນເຈົ້າພຣະເຈົ້າຂອງພວກເຂົາ [23]ປະຊາຊາດທັງຫລາຍຈະຮູ້ວ່າ ເຊື້ອສາຍອິສຣາເອນ
ໄດ້ຖືກກວາດໄປເປັນຊະເລີຍຍ້ອນຄວາມຊົ່ວຊ້າຂອງເຂົາ ເພາະພວກເຂົາໄດ້ລະເມີດຕໍ່ເຮົາ ດັ່ງ-
ນັ້ນ ເຮົາຈຶ່ງເຊື່ອງໜ້າຂອງເຮົາຈາກພວກເຂົາ ແລະມອບພວກເຂົາໄວ້ໃນມືພວກສັດຕູ ພວກເຂົາ
ຈຶ່ງລົ້ມລົງດ້ວຍດາບໝົດທຸກຄົນ [24]ເຮົາໄດ້ເຮັດຕໍ່ຄວາມເປິເປື້ອນ ແລະການລະເມີດຂອງພວກ
ເຂົາທັງຫລາຍ ແລະເຮົາເຊື່ອງໜ້າຂອງເຮົາຈາກພວກເຂົາ

## ອິສຣາເອນຈະກັບສູ່ສະພາບເດີມ

[25]ເພາະສະນັ້ນ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວວ່າ ບັດນີ້ ເຮົາຈະໃຫ້ຢາໂຄບກັບສູ່ສະ-
ພາບເດີມ ແລະຈະມີຄວາມກະລຸນາຕໍ່ເຊື້ອສາຍອິສຣາເອນທັງໝົດ ພວກເຂົາຈະຫວງແຫນນາມ
ບໍລິສຸດຂອງເຮົາ [26]ເມື່ອພວກເຂົາມາອາໄສຢູ່ຢ່າງປອດໄພໃນແຜ່ນດິນ ໂດຍບໍ່ມີຜູ້ໃດເຮັດໃຫ້
ພວກເຂົາຢ້ານກົວ ພວກເຂົາຈະທົນຮັບຄວາມອັບອາຍຂາຍໜ້າຂອງຕົນ ທັງການລະເມີດຊຶ່ງ
ພວກເຂົາໄດ້ເຄີຍປະພຶດຕໍ່ເຮົາ [27]ເມື່ອເຮົາໄດ້ນຳພວກເຂົາກັບມາຈາກຊົນຊາດທັງຫລາຍ ແລະ
ຮວບຮວມມາຈາກແຜ່ນດິນສັດຕູຂອງພວກເຂົາ ເມື່ອເຮົາສະແດງຄວາມບໍລິສຸດຂອງເຮົາທ່າມ-
ກາງພວກເຂົາ ຕໍ່ໜ້າຕໍ່ຕາຂອງປະຊາຊາດເປັນຈຳນວນຫລາຍ [28]ແລ້ວພວກເຂົາຈະຮູ້ວ່າເຮົາ
ແມ່ນພຣະຜູ້ເປັນເຈົ້າພຣະເຈົ້າຂອງພວກເຂົາ ເພາະເຮົາໄດ້ສົ່ງໃຫ້ພວກເຂົາຖືກກວາດໄປເປັນ
ຊະເລີຍຢູ່ທ່າມກາງບັນດາປະຊາຊາດ ແລ້ວກໍຮວບຮວມພວກເຂົາເຂົ້າມາໃນແຜ່ນດິນຂອງພວກ
ເຂົາ ເຮົາຈະບໍ່ປ່ອຍໃຫ້ຈັກຄົນໜຶ່ງໃນພວກເຂົາເຫລືອຢູ່ທ່າມກາງບັນດາປະຊາຊາດອີກເລີຍ
[29]ແລະເຮົາຈະບໍ່ເຊື່ອງໜ້າຂອງເຮົາໄວ້ຈາກພວກເຂົາອີກ ເມື່ອເຮົາຖອກວິນຍານຂອງເຮົາເໜືອ
ເຊື້ອສາຍອິສຣາເອນ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ແຫລະ"

# ບົດທີ 40

## ຜູ້ສົ່ງຂ່າວສະຫວັນທີ່ຖືໄມ້ວັດແທກ

[1]ປີທີຊາວຫ້າທີ່ເຮົາໄດ້ຖືກກວາດໄປເປັນຊະເລີຍນັ້ນ ໃນຕົ້ນປີວັນທີສິບຂອງເດືອນ ໃນປີທີ
ສິບສີ່ຫລັງຈາກທີ່ພວກເຂົາຊະນະກຸງນັ້ນ ໃນມື້ດຽວນັ້ນ ພຣະຫັດຂອງພຣະຜູ້ເປັນເຈົ້າມາຢູ່ເໜືອ
ຂ້າພະເຈົ້າ ແລະໄດ້ນຳຂ້າພະເຈົ້າມາ [2]ໃນນິມິດແຫ່ງພຣະເຈົ້າ ພຣະອົງໄດ້ນຳຂ້າພະເຈົ້າມາ
ເຖິງແຜ່ນດິນອິສຣາເອນ ແລະພຣະອົງໄດ້ວາງຂ້າພະເຈົ້າໄວ້ເທິງພູເຂົາສູງຫລາຍ ຊຶ່ງຢູ່ຊື່ນັ້ນ
ທາງທິດໃຕ້ມີສິ່ງກໍ່ສ້າງເໝືອນກັບເມືອງໜຶ່ງ [3]ເມື່ອພຣະອົງໄດ້ນຳຂ້າພະເຈົ້າມາໃນບ່ອນນັ້ນ

ເບິ່ງແມ ຊາຍຄົນໜຶ່ງມີລັກສະນະຄ້າຍຄືທອງເຫລືອງ ມີເຊືອກປ່ານເສັ້ນໜຶ່ງ ແລະໄມ້ວັດແທກ
ອັນໜຶ່ງຢູ່ໃນມື ເພິ່ນຢືນຢູ່ທີ່ທໍາປະຕູ [4]ແລະຊາຍຜູ້ນັ້ນກ່າວແກ່ຂ້າພະເຈົ້າວ່າ "ບຸດແຫ່ງມະນຸດ
ເອີຍ ຈົ່ງເບິ່ງດ້ວຍຕາເອງເຖີດ ຈົ່ງຟັງດ້ວຍຫູຂອງເຈົ້າ ແລະຈົ່ງເອົາໃຈໃສ່ກັບສິ່ງທັງໝົດທີ່ເຮົາ
ຈະສະແດງໃຫ້ແກ່ເຈົ້າ ເພາະວ່າທີ່ນໍາເຈົ້າມາບ່ອນນີ້ກໍເພື່ອຈະສະແດງໃຫ້ແກ່ເຈົ້າ ສິ່ງທັງໝົດທີ່
ເຈົ້າເຫັນນັ້ນ ຈົ່ງປະກາດແກ່ເຊື້ອສາຍອິສຣາເອນ"

## ການວັດແທກພຣະວິຫານທີ່ຈະມີໃນອະນາຄົດ

[5]ເບິ່ງແມ ມີກໍາແພງອ້ອມຢູ່ຮອບບໍລິເວນນອກຂອງພຣະວິຫານ ແລະໃນມືຂອງຊາຍຜູ້ນັ້ນ ມີ
ໄມ້ວັດແທກຍາວຫົກສອກ ແຕ່ລະສອກຍາວເທົ່າກັບສອກຄືບ ດັ່ງນັ້ນ ເພິ່ນຈຶ່ງວັດແທກຄວາມ
ໜາຂອງກໍາແພງໄດ້ໜຶ່ງໄມ້ວັດແທກ ແລະຄວາມສູງໄດ້ໜຶ່ງໄມ້ວັດແທກ [6]ແລ້ວເພິ່ນເຂົ້າໄປຕາມ
ທໍາປະຕູຊຶ່ງຫັນໜ້າໄປທາງທິດຕາເວັນອອກຂຶ້ນໄປຕາມຂັ້ນໄດ ແລະວັດແທກທາງເຂົ້າປະຕູໄດ້
ເລິກໜຶ່ງໄມ້ວັດແທກ ແລະອີກທາງເຂົ້າໜຶ່ງໄດ້ເລິກໜຶ່ງໄມ້ວັດແທກ [7]ຫ້ອງຍາມຍາວໜຶ່ງໄມ້ວັດ-
ແທກ ແລະກວ້າງໜຶ່ງໄມ້ວັດແທກ ບ່ອນວ່າງລະຫວ່າງຫ້ອງຍາມເຫລົ່ານັ້ນ ຍາວຫ້າສອກ ແລະ
ທາງເຂົ້າປະຕູທີ່ຢູ່ແຄມລະບຽງທໍາປະຕູຕອນປາຍຊັ້ນໃນໄດ້ໜຶ່ງໄມ້ວັດແທກ [8]ແລ້ວເພິ່ນກໍວັດ-
ແທກລະບຽງຂອງທໍາປະຕູຕອນປາຍຊັ້ນໃນໄດ້ໜຶ່ງໄມ້ວັດແທກ [9]ເພິ່ນວັດແທກລະບຽງຂອງທໍາປະ-
ຕູໄດ້ແປດສອກ ເສົາລະບຽງນັ້ນສອງສອກ ແລະລະບຽງຂອງທໍາປະຕູຢູ່ທີ່ຕອນປາຍຂ້າງໃນ
[10]ແຕ່ລະດ້ານຂອງທໍາປະຕູທາງຕາເວັນອອກມີຫ້ອງຍາມຢູ່ສາມຫ້ອງ ຫ້ອງທັງສາມມີຂະໜາດ
ເທົ່າກັນ ແລະເສົາທີ່ຢູ່ທັງສອງຂ້າງກໍມີຂະໜາດດຽວກັນ [11]ແລ້ວເພິ່ນຈຶ່ງວັດແທກຄວາມກວ້າງ
ຊ່ອງເປີດຂອງທາງເຂົ້າທໍາປະຕູໄດ້ສິບສອກ ແລະຄວາມຍາວຂອງທໍາປະຕູສິບສາມສອກ [12]ໜ້າ
ຫ້ອງຍາມນັ້ນມີເຄື່ອງກັ້ນເບື້ອງລະໜຶ່ງສອກ ແລະຫ້ອງຍາມນັ້ນຍາວເບື້ອງລະຫົກສອກ [13]ແລ້ວ
ເພິ່ນກໍວັດແທກທໍາປະຕູຈາກຫລັງຄາຂອງຫ້ອງຍາມຫ້ອງໜຶ່ງໄປຍັງຫລັງຄາຂອງຫ້ອງຍາມອີກ
ຫ້ອງໜຶ່ງ ໄດ້ກວ້າງຊາວຫ້າສອກ ຈາກທາງເຂົ້າໜຶ່ງໄປຍັງອີກທາງເຂົ້າໜຶ່ງ [14]ເພິ່ນເຮັດເສົາ
ທັງຫລາຍໄດ້ຫົກສິບສອກ ແລະຮອບທໍາປະຕູມີເດີ່ນໄປເຖິງເສົາ [15]ວັດແທກຈາກຂ້າງໜ້າທໍາປະຕູ
ຊຶ່ເຂົ້າໄປຍັງປາຍລະບຽງຊັ້ນໃນຂອງທໍາປະຕູໄດ້ຫ້າສິບສອກ [16]ຕາມທໍາປະຕູນັ້ນມີປ່ອງຢ້ຽມອ້ອມ
ຮອບ ຄ່ອຍໆແຄບເຂົ້າໄປຂ້າງໃນ ທັງໃນເສົາ ໃນຫ້ອງຍາມ ແລະລະບຽງກໍມີປ່ອງຢ້ຽມຢູ່ອ້ອມ
ຂ້າງໃນຄືກັນ ຢູ່ເສົາມີຕົ້ນຕານ

[17]ແລ້ວເພິ່ນນໍາຂ້າພະເຈົ້າອອກມາທີ່ເດີ່ນຊັ້ນນອກ ແລະເບິ່ງແມ ມີຫ້ອງຫລາຍຫ້ອງ ມີພື້ນ
ຫີນເຮັດໄວ້ຮອບເດີ່ນ ມີຫ້ອງສາມສິບຫ້ອງຫັນໜ້າເຂົ້າຫາພື້ນຫີນ [18]ແລະພື້ນຫີນນັ້ນມີຢູ່ຕາມ
ຂ້າງທາງເຂົ້າທໍາປະຕູ ເທົ່າກັບຄວາມຍາວຂອງທໍາປະຕູ ນີ້ເປັນພື້ນຫີນຕອນລຸ່ມ [19]ແລ້ວເພິ່ນກໍ
ວັດແທກຄວາມກວ້າງຈາກໜ້າທໍາປະຕູຂ້າງລຸ່ມໄປຍັງໜ້າເດີ່ນຂ້າງໃນເບື້ອງນອກໄດ້ໜຶ່ງຮ້ອຍ
ສອກ ຢູ່ທັງທາງຕາເວັນອອກ ແລະທາງເໜືອ

[20]ສ່ວນທໍາປະຕູຂອງເດີ່ນນອກຫັນໜ້າໄປທາງເໜືອ ເພິ່ນກໍວັດແທກຄວາມຍາວ ແລະຄວາມ
ກວ້າງຂອງມັນ [21]ຫ້ອງຍາມເບື້ອງລະສາມຫ້ອງ ກັບເສົາ ແລະລະບຽງມີຂະໜາດເທົ່າກັນກັບທໍາ
ປະຕູທໍາອິດ ຍາວຫ້າສິບສອກ ກວ້າງຊາວຫ້າສອກ [22]ປ່ອງຢ້ຽມ ລະບຽງ ຕົ້ນຕານຂອງທໍາປະຕູ

ນີ້ມີຂະໜາດເທົ່າກັນກັບຂອງທໍປະຕູຊຶ່ງຫັນໜ້າໄປທາງທິດຕາເວັນອອກ ແລະມີຂັ້ນໄດເຈັດຂັ້ນ
ນຳຂຶ້ນໄປ ແລະລະບຽງນັ້ນຢູ່ຂ້າງໃນ 23ກົງກັນຂ້າມກັບປະຕູຊຶ່ງຢູ່ທາງເໜືອເຊັ່ນດຽວກັນກັບ
ປະຕູທີ່ຢູ່ທາງຕາເວັນອອກ ມີປະຕູເປີດໄປສູ່ເດີ່ນຊັ້ນໃນ ແລະເພິ່ນກໍວັດແທກຈາກປະຕູໜຶ່ງໄປ
ອີກປະຕູໜຶ່ງໄດ້ໜຶ່ງຮ້ອຍສອກ
24ເພິ່ນໄດ້ນຳຂ້າພະເຈົ້າຊື່ໄປຍັງທິດໃຕ້ ແລະເບິ່ງແມ ມີທໍປະຕູທາງທິດໃຕ້ໜຶ່ງທໍປະຕູ ເພິ່ນ
ວັດແທກເສົາ ແລະວັດແທກລະບຽງ ມີຂະໜາດເທົ່າກັນກັບບ່ອນອື່ນ 25ມີປ່ອງຢ້ຽມທີ່ທໍປະຕູ
ແລະບ່ອນລະບຽງໂດຍຮອບເໝືອນປ່ອງຢ້ຽມບ່ອນອື່ນ ຍາວຫ້າສິບສອກ ແລະກວ້າງຊາວຫ້າ
ສອກ 26ມີຂັ້ນໄດເຈັດຂັ້ນນຳຂຶ້ນໄປ ແລະລະບຽງນັ້ນຢູ່ຂ້າງໃນ ມີຕົ້ນຕານຢູ່ບ່ອນເສົາເບື້ອງລະ
ຕົ້ນ 27ມີປະຕູໜຶ່ງຢູ່ທາງທິດໃຕ້ຂອງເດີ່ນຊັ້ນໃນ ແລະເພິ່ນກໍວັດແທກຈາກປະຕູໜຶ່ງໄປຍັງອີກ
ປະຕູໜຶ່ງຊື່ໄປ ທາງທິດໃຕ້ ໄດ້ໜຶ່ງຮ້ອຍສອກ
28ແລ້ວເພິ່ນນຳຂ້າພະເຈົ້າມາຍັງເດີ່ນຊັ້ນໃນຢູ່ປະຕູທິດໃຕ້ ແລະວັດແທກປະຕູທິດໃຕ້ ມີຂະ-
ໜາດຢ່າງດຽວກັນກັບປະຕູອື່ນໆ 29ຫ້ອງຍາມ ເສົາ ແລະລະບຽງຂອງທໍປະຕູນີ້ມີຂະໜາດດຽວ
ກັບບ່ອນອື່ນ ມີປ່ອງຢ້ຽມທີ່ທໍປະຕູ ແລະລະບຽງໂດຍຮອບ ຍາວຫ້າສິບສອກ ແລະກວ້າງຊາວ
ຫ້າສອກ 30ມີລະບຽງຢູ່ຮອບຍາວຊາວຫ້າສອກ ກວ້າງຫ້າສອກ 31ລະບຽງນັ້ນຫັນໜ້າສູ່ເດີ່ນຊັ້ນ
ນອກ ມີຕົ້ນຕານຢູ່ທີ່ເສົາ ແລະຂັ້ນໄດນີ້ມີແປດຂັ້ນ
32ແລ້ວເພິ່ນກໍພາຂ້າພະເຈົ້າມາທີ່ເດີ່ນຊັ້ນໃນເບື້ອງຕາເວັນອອກ ແລະວັດແທກທໍປະຕູຂະ-
ໜາດດຽວກັນກັບທໍປະຕູອື່ນ 33ຫ້ອງຍາມ ເສົາ ແລະລະບຽງຂອງທໍປະຕູນີ້ມີຂະໜາດດຽວກັນ
ກັບບ່ອນອື່ນ ມີປ່ອງຢ້ຽມທີ່ທໍປະຕູແລະບ່ອນລະບຽງໂດຍຮອບ ຍາວຫ້າສິບສອກ ແລະກວ້າງ
ຊາວຫ້າສອກ 34ລະບຽງຂອງເບື້ອງນີ້ຫັນໜ້າສູ່ເດີ່ນຊັ້ນນອກ ແລະມີຕົ້ນຕານຢູ່ທີ່ເສົາເບື້ອງລະ
ຕົ້ນ ແລະຂັ້ນໄດນີ້ມີແປດຂັ້ນ
35ແລ້ວເພິ່ນກໍນຳຂ້າພະເຈົ້າມາຍັງປະຕູເໜືອ ແລ້ວວັດແທກທໍປະຕູນັ້ນມີຂະໜາດດຽວກັນກັບ
ທໍປະຕູອື່ນ 36ຫ້ອງຍາມ ເສົາ ແລະລະບຽງຂອງທໍປະຕູນີ້ມີຂະໜາດດຽວກັນກັບບ່ອນອື່ນ ມີ
ປ່ອງຢ້ຽມໂດຍຮອບ ຍາວຫ້າສິບສອກ ແລະກວ້າງຊາວຫ້າສອກ 37ລະບຽງຂອງເບື້ອງນີ້ຫັນໜ້າ
ສູ່ເດີ່ນຊັ້ນນອກ ແລະມີຕົ້ນຕານຢູ່ທີ່ເສົາເບື້ອງລະຕົ້ນ ແລະຂັ້ນໄດນີ້ມີແປດຂັ້ນ
38ມີຫ້ອງໆໜຶ່ງ ແລະມີທາງເຂົ້າຢູ່ທີ່ເສົາຂອງທໍປະຕູ ເປັນບ່ອນລ້າງເຄື່ອງເຜົາບູຊາ 39ຢູ່ແຈ
ຂອງທໍປະຕູມີໂຕະເບື້ອງລະສອງໜ່ວຍ ເທິງນີ້ສຳລັບເຜົາບູຊາ ເຄື່ອງບູຊາໄຖ່ບາບ ແລະເຄື່ອງ
ບູຊາໄຖ່ການລະເມີດ 40ແລະທາງນອກ ທາງທີ່ຂຶ້ນໄປຫາທາງເຂົ້າທໍປະຕູເໜືອມີໂຕະສອງໜ່ວຍ
ອີກເບື້ອງໜຶ່ງຂອງແຈຂອງທໍປະຕູມີໂຕະສອງໜ່ວຍ 41ມີໂຕະຢູ່ຂ້າງນີ້ສີ່ໜ່ວຍ ແລະມີໂຕະຢູ່
ຂ້າງນັ້ນຂ້າງໆທໍປະຕູສີ່ໜ່ວຍ ເປັນແປດໜ່ວຍນຳກັນ ຊຶ່ງພວກເຂົາໃຊ້ເປັນບ່ອນຂ້າສັດຖວາຍ
ບູຊາ 42ມີໂຕະສີ່ໜ່ວຍເຮັດດ້ວຍຫີນສະກັດສຳລັບເຄື່ອງເຜົາບູຊາ ຍາວໜຶ່ງສອກຄືບ ແລະ
ກວ້າງໜຶ່ງ ສອກຄືບ ສູງໜຶ່ງສອກ ສຳລັບວາງເຄື່ອງມື ຊຶ່ງພວກເຂົາໃຊ້ຂ້າສັດຖວາຍບູຊາ
ແລະເຄື່ອງສັດບູຊາ 43ມີຂໍເກາະຍາວຄືບໜຶ່ງຕິດຢູ່ຂ້າງໃນໂດຍຮອບ ເທິງໂຕະນີ້ພວກເຂົາວາງ
ຊີ້ນຂອງເຄື່ອງບູຊາ

## ຫ້ອງສຳລັບພວກນັກຮ້ອງ ແລະປະໂລຫິດ

44ຂ້າງນອກຫໍປະຕູຊັ້ນໃນ ໃນເດີ່ນຊັ້ນໃນມີຫ້ອງສຳລັບພວກນັກຮ້ອງ ຊຶ່ງຢູ່ຂ້າງຫໍປະຕູເໜືອ
ຫັນໜ້າໄປທິດໃຕ້ ອີກຫ້ອງໜຶ່ງຢູ່ຂ້າງຫໍປະຕູຕາເວັນອອກ ຫັນໜ້າໄປທິດເໜືອ 45ແລະເພິ່ນ
ບອກຂ້າພະເຈົ້າວ່າ "ຫ້ອງນີ້ທີ່ຫັນໜ້າໄປທາງທິດໃຕ້ແມ່ນສຳລັບປະໂລຫິດຜູ້ເບິ່ງແຍງພຣະວິ-
ຫານ 46ແລະຫ້ອງທີ່ຫັນໜ້າໄປທາງເໜືອແມ່ນສຳລັບປະໂລຫິດຜູ້ເບິ່ງແຍງແທ່ນບູຊາ ປະໂລຫິດ
ເຫລົ່ານີ້ເປັນລູກຊາຍຂອງຊາໂດກ ໃນບັນດາລູກຊາຍຂອງເລວີ ທີ່ເຂົ້າມາໃກ້ພຣະຜູ້ເປັນເຈົ້າ
ເພື່ອຈະບົວລະບັດພຣະອົງ" 47ແລະເພິ່ນກໍວັດແທກເດີ່ນໄດ້ຍາວໜຶ່ງຮ້ອຍສອກ ກວ້າງໜຶ່ງຮ້ອຍ
ສອກເປັນສີ່ຫລ່ຽມຈັດຕຸລັດ ແລະແທ່ນບູຊາຢູ່ຕໍ່ໜ້າພຣະວິຫານ

## ລະບຽງຂອງພຣະວິຫານ

48ແລ້ວເພິ່ນນຳຂ້າພະເຈົ້າມາທີ່ລະບຽງຂອງພຣະວິຫານ ແລະວັດແທກເສົາຂອງລະບຽງໄດ້
ຫ້າສອກທັງສອງເບື້ອງ ແລະຫໍປະຕູກໍກວ້າງເບື້ອງລະສາມສອກ 49ລະບຽງນັ້ນຍາວຊາວສອກ
ແລະກວ້າງສິບເອັດສອກ ເພິ່ນນຳຂ້າພະເຈົ້າທາງຂັ້ນໄດໄປເຖິງບ່ອນນັ້ນ ແລະມີເສົາຢູ່ຂ້າງເສົາ
ທັງສອງຂ້າງ

# ບົດທີ 41

## ຄຳບັນລະຍາຍເຖິງພຣະວິຫານ

1ຫລັງຈານັ້ນ ເພິ່ນກໍນຳຂ້າພະເຈົ້າມາເຖິງພຣະວິຫານ ແລະໄດ້ວັດແທກເສົາ ກວ້າງເບື້ອງລະ
ຫົກສອກ ຊຶ່ງເທົ່າກັບຄວາມກວ້າງຂອງຫໍເຕັນ 2ຄວາມກວ້າງຂອງທາງເຂົ້ານັ້ນສິບສອກ ແລະ
ກຳແພງຂ້າງທາງເຂົ້າເບື້ອງລະຫ້າສອກ ເພິ່ນວັດແທກຄວາມຍາວຂອງພຣະວິຫານໄດ້ສີ່ສິບ
ສອກ ກວ້າງຊາວສອກ

3ແລ້ວເພິ່ນເຂົ້າໄປຂ້າງໃນ ວັດແທກເສົາຂອງທາງເຂົ້າໄດ້ສອງສອກ ທາງເຂົ້ານັ້ນຫົກສອກ
ແລະຄວາມກວ້າງຂອງທາງເຂົ້ານັ້ນເຈັດສອກ 4ເພິ່ນວັດແທກຄວາມຍາວຂອງຫ້ອງໄດ້ຊາວສອກ
ກວ້າງຊາວສອກ ກາຍພຣະວິຫານອອກໄປ ແລະເພິ່ນບອກຂ້າພະເຈົ້າວ່າ "ນີ້ ເປັນບ່ອນບໍລິສຸດ
ທີ່ສຸດ"

5ແລ້ວເພິ່ນກໍວັດແທກກຳແພງພຣະວິຫານບ່ອນມີຄວາມໜາຫົກສອກ ແລະຫ້ອງລະບຽງນັ້ນ
ກວ້າງສີ່ສອກ ຢູ່ຮອບພຣະວິຫານທຸກດ້ານ 6ຫ້ອງລະບຽງນັ້ນເປັນຫ້ອງສາມຊັ້ນຊ້ອນກັນ ມີຊັ້ນ
ລະສາມສິບຫ້ອງ ມີເສົາຄ້ຳຢູ່ຮອບກຳແພງພຣະວິຫານ ໃຊ້ເປັນບ່ອນໜູນຫ້ອງລະບຽງ ເພື່ອບໍ່
ໃຫ້ຫ້ອງລະບຽງອາໄສກຳແພງພຣະວິຫານ 7ຫ້ອງລະບຽງນັ້ນຍິ່ງສູງຂຶ້ນໄປກໍຍິ່ງກວ້າງອອກ
ຕາມສ່ວນຂະຫຍາຍຂອງເສົາຄ້ຳຈາກຫ້ອງໜຶ່ງທີ່ຊ້ອນຢູ່ເທິງອີກຫ້ອງໜຶ່ງໂດຍຮອບ ຢູ່ຂ້າງ
ພຣະວິຫານມີຂັ້ນໄດນຳຂຶ້ນຂ້າງເທິງ ດັ່ງນີ້ແຫລະ ຜູ້ໃດທີ່ຂຶ້ນໄປຈາກຫ້ອງຕ່ຳທີ່ສຸດ ເຖິງຫ້ອງ
ເທິງກໍຕ້ອງລອດຜ່ານຫ້ອງກາງ

8ຂ້າພະເຈົ້າຍັງເຫັນອີກວ່າ ພຣະວິຫານນັ້ນມີຍົກພື້ນຢູ່ໂດຍຮອບ ຖານຂອງຫ້ອງລະບຽງວັດ-
ແທກໄດ້ໜຶ່ງໄມ້ວັດແທກເຕັມ ຍາວຫົກສອກ 9ຝາທາງນອກຂອງຫ້ອງລະບຽງໜາຫ້າສອກ

ແລະສ່ວນທີ່ວ່າງຄືສະຖານທີ່ຂອງຫ້ອງລະບຽງທີ່ຢູ່ຂ້າງໃນນັ້ນ 10ລະຫວ່າງຫ້ອງລະບຽງແຕ່ລະ
ຫ້ອງມີຄວາມກວ້າງຊາວສອກໂດຍຮອບພຣະວິຫານທຸກດ້ານ 11ແລະປະຕູຂອງຫ້ອງລະບຽງນັ້ນ
ເປີດເຂົ້າໄປສູ່ສ່ວນເທິງຍົກພື້ນທີ່ວ່າງ ປະຕູໜຶ່ງຫັນໄປທາງເໜືອ ແລະອີກປະຕູໜຶ່ງຫັນໄປທາງ
ໃຕ້ ຄວາມກວ້າງຂອງສ່ວນທີ່ວ່າງນັ້ນຄືຫ້າສອກໂດຍຮອບ

12ຕຶກທີ່ຫັນໜ້າມາຍັງເດີ່ນຂອງພຣະວິຫານທາງທິດຕາເວັນຕົກນັ້ນກວ້າງເຈັດສິບສອກ ແລະ
ຝາຂອງຕຶກໜາຫ້າສອກໂດຍຮອບ ແລະຍາວເກົ້າສິບສອກ

13ແລ້ວເພິ່ນກໍວັດແທກພຣະວິຫານໄດ້ຍາວໜຶ່ງຮ້ອຍສອກ ເດີ່ນ ແລະຕຶກພ້ອມກັບຝາຍາວ
ໜຶ່ງຮ້ອຍສອກ 14ຄວາມກວ້າງທາງທິດຕາເວັນອອກຂອງດ້ານໜ້າຂອງພຣະວິຫານທັງຂອງເດີ່ນ
ຍາວໜຶ່ງຮ້ອຍສອກ

15ແລ້ວເພິ່ນກໍວັດແທກຄວາມຍາວຂອງຕຶກຊຶ່ງຫັນໜ້າໄປສູ່ເດີ່ນທີ່ຢູ່ທາງຫລັງ ພ້ອມທັງຝາ
ຂ້າງໆ ຍາວໜຶ່ງຮ້ອຍສອກ ຫ້ອງໂຖງຂອງພຣະວິຫານນັ້ນ ແລະເດີ່ນຂອງລະບຽງ 16ທັງທາງ
ເຂົ້າປະຕູ ປ່ອງຢ້ຽມ ແລະຝາຮອບທັງສາມຊັ້ນຊຶ່ງຢູ່ກົງກັນຂ້າມປະຕູ ມີໄມ້ຕິດຢູ່ໂດຍຮອບຕັ້ງ-
ແຕ່ພື້ນເຖິງປ່ອງຢ້ຽມ ແລະປ່ອງຢ້ຽມນີ້ກໍຄຸມໄວ້ 17ປ່ອງຂອງພຣະວິຫານຈົນເຖິງທີ່ຢູ່ເໜືອປະຕູ
ເຖິງແມ່ນເປັນຫ້ອງຊັ້ນໃນ ແລະຂ້າງນອກ ແລະເທິງຝາໂດຍຮອບບ່ອນຫ້ອງຊັ້ນໃນ ແລະຫ້ອງ
ໂຖງ ກໍເຮັດໂດຍການວັດແທກ 18ພຣະວິຫານນັ້ນມີຮູບເຄຣຸບ ແລະຮູບຕົ້ນຕານ ຮູບຕົ້ນຕານຈະ
ຢູ່ລະຫວ່າງເຄຣຸບທຸກຮູບ ເຄຣຸບທຸກຕົນມີສອງໜ້າ 19ໜ້າຂອງຜູ້ຊາຍຊີ້ຕົ້ນຕານທີ່ຢູ່ຂ້າງໜຶ່ງ
ແລະໜ້າຂອງໂຕສິງໜຸ່ມຊີ້ຕົ້ນຕານທີ່ຢູ່ອີກຂ້າງໜຶ່ງ ມີຮູບຢ່າງນີ້ຮອບພຣະວິຫານທັງໝົດ
20ຈາກພື້ນເຖິງປະຕູ ມີຮູບເຄຣຸບ ແລະຮູບຕົ້ນຕານແກະສະຫລັກຢູ່ທີ່ຝາພຣະວິຫານ 21ສ່ວນເສົາ
ປະຕູຂອງພຣະວິຫານນັ້ນ ສີ່ຫລ່ຽມຂ້າງໜ້າສະຖານທີ່ບໍລິສຸດ ຮູບຮ່າງຂອງໂຕນັ້ນກໍເໝືອນກັບ
ຮູບຮ່າງຂອງອີກໂຕໜຶ່ງ 22ແທ່ນບູຊາເຮັດດ້ວຍໄມ້ສູງສາມສອກຍາວສອງສອກ ທັງແຈ ຄວາມ
ຍາວ ແລະຢູ່ຝາເຮັດດ້ວຍໄມ້ ເພິ່ນບອກຂ້າພະເຈົ້າວ່າ "ນີ້ແມ່ນໂຕະຊຶ່ງຢູ່ຕໍ່ພຣະພັກຂອງພຣະ-
ຜູ້ເປັນເຈົ້າ" 23ພຣະວິຫານ ແລະສະຖານທີ່ບໍລິສຸດມີປະຕູຄູ່ແຫ່ງລະຄູ່ 24ປະຕູເຫລົ່ານັ້ນມີສອງ
ບານ ຄືບານພັບສອງບານ ປະຕູໜຶ່ງມີສອງບານ ແລະອີກປະຕູໜຶ່ງຕີເຂົ້າກັນ 25ເທິງປະຕູຂອງ
ພຣະວິຫານ ມີເຄຣຸບ ແລະຕົ້ນຕານແກະໄວ້ ເຊັ່ນດຽວກັນກັບທີ່ແກະໄວ້ເທິງຝາ ມີສິ້ນໄມ້ຢູ່ທີ່
ໜ້າລະບຽງທາງນອກ 26ມີປ່ອງຢ້ຽມ ແລະມີຕົ້ນຕານຢູ່ທັງສອງຂ້າງ ຄືຢູ່ເທິງຝາດ້ານຂ້າງລະ-
ບຽງ ທັງຫ້ອງລະບຽງພຣະວິຫານ ແລະສິ້ນທັງຫລາຍ

# ບົດທີ 42

## ຫ້ອງຕ່າງໆຂອງພຣະວິຫານ

1ແລ້ວເພິ່ນກໍພາຂ້າພະເຈົ້າມາເຖິງເດີ່ນຊັ້ນນອກ ຊີ້ທິດເໜືອ ແລະນຳຂ້າພະເຈົ້າມາເຖິງຫ້ອງ
ຊຶ່ງຢູ່ກົງກັນຂ້າມກັບເດີ່ນ ແລະກົງກັນຂ້າມກັບຕຶກທາງດ້ານທິດເໜືອ 2ຄວາມຍາວຂອງຕຶກທີ່ຢູ່
ໜ້າປະຕູທາງດ້ານເໜືອນັ້ນເປັນໜຶ່ງຮ້ອຍສອກ ແລະກວ້າງຫ້າສິບສອກ 3ຕິດຕໍ່ກັບສ່ວນທີ່ຊາວ
ສອກຊຶ່ງເປັນສ່ວນຂອງເດີ່ນຊັ້ນໃນ ຫັນໜ້າເຂົ້າສູ່ພື້ນຫີນຊຶ່ງເປັນສ່ວນຂອງເດີ່ນຂ້າງນອກ ເປັນ

ລະບຽງຊ້ອນລະບຽງສາມຊັ້ນ [4]ແລະຂ້າງໜ້າຫ້ອງມີທາງເຂົ້າຂ້າງໃນກວ້າງສິບສອກ ຍາວໜຶ່ງ
ສອກ ບັນດາປະຕູຫ້ອງເຫລົ່ານີ້ຢູ່ທາງດ້ານເໜືອ [5]ຫ້ອງຊັ້ນເທິງແຄບກວ່າ ເພາະລະບຽງເຫລົ່າ
ນີ້ສູງກວ່າລະບຽງຫ້ອງຊັ້ນລຸ່ມ ແລະຊັ້ນກາງໃນຕຶກນັ້ນ [6]ເພາະວ່າເປັນຫ້ອງສາມຊັ້ນ ແລະບໍ່ມີ
ເສົາຮອງເໝືອນດັ່ງເສົາທີ່ຢູ່ເດີ່ນຂ້າງນອກ ເພາະສະນັ້ນ ຫ້ອງຊັ້ນເທິງຈຶ່ງແຄບກວ່າພື້ນຫລາຍ
ກວ່າຫ້ອງຊັ້ນລຸ່ມ ແລະຊັ້ນກາງ [7]ແລະມີຝາທາງນອກຕິດກັບຫ້ອງ ຊື່ໄປຍັງເດີ່ນຊັ້ນນອກ ກົງ-
ກັນຂ້າມກັບຫ້ອງ ຍາວຫ້າສິບສອກ [8]ເພາະວ່າຫ້ອງທີ່ຢູ່ເດີ່ນຊັ້ນນອກຍາວຫ້າສິບສອກ ແລະ
ເບິ່ງແມ ສ່ວນຫ້ອງເຫລົ່ານັ້ນທີ່ກົງກັນຂ້າມກັບພຣະວິຫານຍາວໜຶ່ງຮ້ອຍສອກ [9]ກ້ອງຫ້ອງ
ເຫລົ່ານັ້ນມີທາງເຂົ້າຢູ່ທາງທິດຕາເວັນອອກ ຖ້າເຂົ້າໄປຈາກເດີ່ນຊັ້ນນອກ

[10]ຊື່ຝາທາງນອກເລີ່ມຕົ້ນ ທາງທິດຕາເວັນອອກກໍເຊັ່ນດຽວກັນ ກົງກັນຂ້າມກັບເດີ່ນ ແລະ
ກົງກັນຂ້າມກັບຕຶກມີຫ້ອງຫລາຍຫ້ອງ [11]ທາງຍ່າງຢູ່ໜ້າຫ້ອງຄ້າຍຄືກັບຫ້ອງທາງທິດເໜືອ ຍາວ
ແລະກວ້າງຂະໜາດດຽວກັນ ມີທາງອອກ ແຜນຜັງແລະປະຕູຢ່າງດຽວກັນ [12]ທາງລຸ່ມຫ້ອງທິດ-
ໃຕ້ມີທາງເຂົ້າຢູ່ດ້ານຕາເວັນອອກບ່ອນທີ່ເຂົ້າມາຕາມທາງຍ່າງ ກົງກັນຂ້າມມີຝາແບ່ງ

[13]ແລ້ວເພິ່ນກ່າວແກ່ຂ້າພະເຈົ້າວ່າ "ຫ້ອງທາງທິດເໜືອແລະຫ້ອງທາງທິດໃຕ້ຊື່ຂ້າມເດີ່ນເປັນ
ຫ້ອງບໍລິສຸດ ບ່ອນປະໂລຫິດຜູ້ເຂົ້າໃກ້ພຣະຜູ້ເປັນເຈົ້າຈະຮັບປະທານຂອງຖວາຍອັນບໍລິສຸດທີ່
ສຸດ ພວກເຂົາຈະວາງຂອງຖວາຍອັນບໍລິສຸດທີ່ສຸດນັ້ນ ໄວ້ບ່ອນນັ້ນ ແລະເຄື່ອງບູຊາພືດຜົນເປັນ
ເມັດ ເຄື່ອງບູຊາໄຖ່ບາບ ເຄື່ອງບູຊາໄຖ່ການລະເມີດ ເພາະວ່າບ່ອນນັ້ນບໍລິສຸດ [14]ເມື່ອປະໂລ-
ຫິດເຂົ້າໄປໃນບ່ອນບໍລິສຸດ ພວກເຂົາຈະບໍ່ອອກໄປຈາກບ່ອນບໍລິສຸດເຂົ້າສູ່ເດີ່ນຊັ້ນນອກ ແຕ່ຈະ
ປົດເຄື່ອງແຕ່ງກາຍທີ່ຕົນນຸ່ງປະຕິບັດໜ້າທີ່ວາງໄວ້ບ່ອນນັ້ນເພາະສິ່ງເຫລົ່ານີ້ບໍລິສຸດ ພວກເຂົາ
ຈະຕ້ອງນຸ່ງເຄື່ອງແຕ່ງກາຍອື່ນກ່ອນທີ່ພວກເຂົາຈະເຂົ້າໄປສູ່ສ່ວນທີ່ມີໄວ້ສຳລັບປະຊາຊົນ"

[15]ເມື່ອເພິ່ນໄດ້ວັດແທກທາງໃນບໍລິເວນພຣະວິຫານສຳເລັດແລ້ວ ເພິ່ນກໍນຳຂ້າພະເຈົ້າອອກ
ມາທາງປະຕູຊຶ່ງຫັນໜ້າໄປທາງທິດຕາເວັນອອກ ແລະວັດແທກບໍລິເວນພຣະວິຫານໂດຍຮອບ
[16]ເພິ່ນວັດແທກດ້ານຕາເວັນອອກດ້ວຍໄມ້ວັດແທກໄດ້ຫ້າຮ້ອຍສອກຕາມໄມ້ວັດແທກໂດຍຮອບ
[17]ແລ້ວເພິ່ນກໍຫັນມາວັດແທກທາງທິດເໜືອໄດ້ຫ້າຮ້ອຍສອກຕາມໄມ້ວັດແທກໂດຍຮອບ [18]ແລ້ວ
ເພິ່ນກໍຫັນມາວັດແທກທາງທິດໃຕ້ໄດ້ຫ້າຮ້ອຍສອກຕາມໄມ້ວັດແທກ [19]ແລ້ວເພິ່ນກໍຫັນມາທາງ
ທິດຕາເວັນຕົກ ວັດແທກໄດ້ຫ້າຮ້ອຍສອກຕາມໄມ້ວັດແທກ [20]ເພິ່ນວັດແທກທັງສີ່ດ້ານ ມີກຳ-
ແພງອ້ອມຮອບຍາວຫ້າຮ້ອຍສອກ ກວ້າງຫ້າຮ້ອຍສອກ ເປັນບ່ອນແບ່ງລະຫວ່າງສະຖານທີ່ບໍ-
ລິສຸດ ແລະທີ່ສາທາລະນະ

## ບົດທີ 43

### ພຣະວິຫານເຕັມໄປດ້ວຍສະຫງ່າລາສີຂອງພຣະເຈົ້າ

[1]ຫລັງຈາກນັ້ນ ເພິ່ນນຳຂ້າພະເຈົ້າມາຍັງປະຕູ ຄືປະຕູທີ່ຫັນໜ້າໄປທິດຕາເວັນອອກ [2]ເບິ່ງ
ແມ ສະຫງ່າລາສີຂອງພຣະເຈົ້າແຫ່ງອິສຣາເອນມາຈາກທິດຕາເວັນອອກ ແລະພຣະສຸລະສຽງ
ຂອງພຣະອົງກໍເໝືອນດັ່ງສຽງນໍ້າ ແລະໂລກກໍຮຸ່ງເຮືອງດ້ວຍສະຫງ່າລາສີຂອງພຣະອົງ [3]ນິມິດ

ທີ່ຂ້າພະເຈົ້າເຫັນນັ້ນກໍເໝືອນກັບນິມິດທີ່ຂ້າພະເຈົ້າເຫັນເມື່ອພຣະອົງສະເດັດມາທຳລາຍເມືອງ
ນັ້ນ ແລະເໝືອນກັບນິມິດທີ່ຂ້າພະເຈົ້າໄດ້ເຫັນທີ່ແຄມແມ່ນ້ຳເກບາ ແລະຂ້າພະເຈົ້າກໍກົ້ມໜ້າ
ຂອງຂ້າພະເຈົ້າລົງເຖິງດິນ [4]ສະຫງ່າລາສີຂອງພຣະຜູ້ເປັນເຈົ້າໄດ້ເຂົ້າໄປໃນພຣະວິຫານທາງ
ປະຕູທີ່ຫັນໄປທາງທິດຕາເວັນອອກ [5]ພຣະວິນຍານກໍຍົກຂ້າພະເຈົ້າຂຶ້ນ ແລະນຳຂ້າພະເຈົ້າມາ
ທີ່ເດີ່ນຊັ້ນໃນ ແລະເບິ່ງແມ ສະຫງ່າລາສີຂອງພຣະຜູ້ເປັນເຈົ້າກໍເຕັມພຣະວິຫານ

[6]ຂະນະທີ່ຊາຍຄົນນັ້ນຍັງຢືນຢູ່ທີ່ຂ້າງຂ້າພະເຈົ້າ ຂ້າພະເຈົ້າໄດ້ຍິນພຣະອົງກ່າວກັບຂ້າພະ-
ເຈົ້າດັ່ງອອກມາຈາກພຣະວິຫານ

## ລາຊະບັນລັງຂອງພຣະເຈົ້າໃນພຣະວິຫານ

[7]ແລະພຣະອົງກ່າວກັບຂ້າພະເຈົ້າວ່າ “ບຸດແຫ່ງມະນຸດເອີຍ ບັນລັງຂອງເຮົາ ແລະສະຖານທີ່
ວາງຕີນຂອງເຮົາຢູ່ບ່ອນນີ້ ເປັນບ່ອນທີ່ເຮົາຈະຢູ່ທ່າມກາງຊົນຊາດອິສຣາເອນເປັນນິດ ແລະ
ເຊື້ອສາຍອິສຣາເອນຈະບໍ່ເຮັດໃຫ້ນາມອັນບໍລິສຸດຂອງເຮົາ ເປັນມົນທິນອີກ ໂດຍຕົວຂອງພວກ
ເຂົາເອງ ຫລືກະສັດຂອງພວກເຂົາ ດ້ວຍການຫລິ້ນຊູ້ຂອງພວກເຂົາ ແລະດ້ວຍສົບແຫ່ງກະສັດ
ຂອງພວກເຂົາໃນສະຖານທີ່ນະມັດສະການສູງສຸດ [8]ໂດຍການວາງທາງເຂົ້າປະຕູຂອງພວກເຂົາ
ໄວ້ຂ້າງທາງເຂົ້າປະຕູຂອງເຮົາ ໂດຍການຕັ້ງເສົາປະຕູຂອງພວກເຂົາ ໄວ້ຂ້າງເສົາປະຕູຂອງ
ເຮົາ ມີພຽງຝາກັ້ນໄວ້ລະຫວ່າງເຮົາກັບພວກເຂົາເທົ່ານັ້ນ ພວກເຂົາໄດ້ເຮັດໃຫ້ນາມບໍລິສຸດຂອງ
ເຮົາເປັນມົນທິນດ້ວຍການອັນໜ້າກຽດຊັງຂອງພວກເຂົາຊຶ່ງພວກເຂົາທັງຫລາຍໄດ້ເຮັດ ດັ່ງນັ້ນ
ເຮົາຈຶ່ງເຜົາຜານພວກເຂົາດ້ວຍຄວາມຄຽດຮ້າຍຂອງເຮົາ [9]ບັດນີ້ ໃຫ້ພວກເຂົາຖິ້ມການຫລິ້ນຊູ້
ທັງຫລາຍຂອງຕົນ ແລະສົບແຫ່ງກະສັດທັງຫລາຍຂອງພວກເຂົາໃຫ້ຫ່າງໄກຈາກເຮົາ ແລະເຮົາ
ຈະຢູ່ທ່າມກາງພວກເຂົາທັງຫລາຍເປັນນິດ

[10]ບຸດແຫ່ງມະນຸດເອີຍ ເຈົ້າຈົ່ງບັນລະຍາຍແກ່ເຊື້ອສາຍອິສຣາເອນໃຫ້ຮູ້ເຖິງພຣະວິຫານ
ເພື່ອວ່າພວກເຂົາຈະໄດ້ອັບອາຍໃນເລື່ອງຄວາມຊົ່ວຊ້າຂອງຕົນ ແລະໃຫ້ພວກເຂົາທັງຫລາຍ
ວັດແທກແບບແຜນ [11]ແລະຖ້າພວກເຂົາອັບອາຍໃນສິ່ງທັງຫລາຍທີ່ຕົນເຮັດມາແລ້ວ ຈົ່ງສະ-
ແດງພາບແຜນຜັງທາງອອກທາງເຂົ້າ ແລະລັກສະນະທັງໝົດຂອງພຣະວິຫານນັ້ນ ແລະຈົ່ງໃຫ້
ພວກເຂົາຮູ້ເຖິງກົດເກນ ລັກສະນະ ແລະກົດທັງໝົດຂອງພຣະວິຫານ ຈົ່ງຂຽນລົງໄວ້ຕໍ່ໜ້າຕໍ່ຕາ
ຂອງພວກເຂົາ ເພື່ອພວກເຂົາຈະໄດ້ຮັກສາລັກສະນະ ແລະກົດເກນທັງໝົດຂອງພຣະວິຫານ
ແລະປະຕິບັດຕາມ

[12]ຕໍ່ໄປນີ້ເປັນກົດຂອງພຣະວິຫານ ຄືບໍລິເວນໂດຍຮອບທີ່ຢູ່ເທິງຍອດພູເຂົາຈະເປັນບ່ອນບໍລິ-
ສຸດທີ່ສຸດ ເບິ່ງແມ ນີ້ເປັນກົດຂອງພຣະວິຫານ

## ການວັດແທກແທ່ນບູຊາ

[13]ຕໍ່ໄປນີ້ເປັນຂະໜາດຂອງແທ່ນບູຊາວັດແທກເປັນສອກ ສອກໜຶ່ງຄືຄວາມຍາວໜຶ່ງສອກ
ກັບໜຶ່ງຄືບ ພື້ນຖານສູງໜຶ່ງສອກ ແລະກວ້າງໜຶ່ງສອກ ບ່ອນຂອບມີຮາງຄືບໜຶ່ງ ແລະຄວາມ
ສູງຂອງແທ່ນບູຊາເປັນດັ່ງນີ້ [14]ຈາກພື້ນຖານທີ່ຢູ່ເທິງດິນມາເຖິງຂ້າງລຸ່ມສູງສອງສອກ ກວ້າງ
ໜຶ່ງສອກ ຈາກຂັ້ນນ້ອຍໄປເຖິງຂັ້ນໃຫຍ່ສູງສີ່ສອກ ກວ້າງໜຶ່ງສອກ [15]ເຕົາຂອງແທ່ນນັ້ນສີ່

ສອກ ແລະຈາກເຕົາແທ່ນມີຈອມຍື່ນຂຶ້ນສີ່ຈອມ [16]ເຕົາແທ່ນນັ້ນເປັນສີ່ຫລ່ຽມຈັດຕຸລັດ ຍາວສິບ
ສອງສອກ ກວ້າງສິບສອງສອກ [17]ຂັ້ນຂ້າງເຕົາກໍສີ່ຫລ່ຽມຈັດຕຸລັດຄືກັນ ຍາວສິບສີ່ສອກ
ກວ້າງສິບສີ່ສອກ ສົ້ນທີ່ອ້ອມຮອບກວ້າງເຄິ່ງສອກ ຖານກວ້າງສອກໜຶ່ງໂດຍຮອບ ຂັ້ນໄດແທ່ນ
ບູຊາຫັນໜ້າໄປທາງທິດຕາເວັນອອກ"

[18]ແລະເພິ່ນເວົ້າກັບຂ້າພະເຈົ້າວ່າ "ບຸດແຫ່ງມະນຸດເອີຍ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວ
ວ່າ ຕໍ່ໄປນີ້ເປັນກົດຂອງແທ່ນບູຊາໃນມື້ທີ່ສ້າງສຳເລັດແລ້ວ ເພື່ອຈະຖວາຍເຄື່ອງເຜົາບູຊາ
ແລະເພື່ອຈະຊິດດ້ວຍເລືອດ

## ຈົ່ງຖວາຍເຄື່ອງບູຊາອີກ

[19]ເຈົ້າຈົ່ງມອບງົວໜຸ່ມໂຕໜຶ່ງເປັນເຄື່ອງບູຊາໄຖ່ບາບແກ່ປະໂລຫິດຄົນເລວີເຊື້ອສາຍຊາໂດກ
ຜູ້ທີ່ເຂົ້າມາໃກ້ເພື່ອບົວລະບັດເຮົາ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ແຫລະ [20]ເຈົ້າຈົ່ງເອົາ
ເລືອດງົວນັ້ນມາໃສ່ໄວ້ເທິງຈອມທັງສີ່ຂອງແທ່ນ ແລະແຈທັງສີ່ຂອງຂັ້ນຂ້າງເຕົາ ແລະຢູ່ອ້ອມ
ຮອບຈອມທັງໝົດ ເຮັດດັ່ງນີ້ແຫລະ ເຈົ້າຈະໄດ້ຊໍາລະແທ່ນແລະເຮັດການລຶບລ້າງມົນທິນຂອງ
ແທ່ນນັ້ນໄວ້ [21]ເຈົ້າຈົ່ງເອົາງົວເຖິກຊຶ່ງເປັນເຄື່ອງບູຊາໄຖ່ບາບ ແລະປະໂລຫິດຈະເຜົາມັນໃນ
ບ່ອນທີ່ກຳນົດໄວ້ຊຶ່ງເປັນບ່ອນຂອງພຣະວິຫານທີ່ຢູ່ພາຍນອກສະຖານທີ່ບໍລິສຸດ

[22]ແລະໃນມື້ທີສອງ ເຈົ້າຈົ່ງຖວາຍລູກແບ້ໂຕຜູ້ທີ່ປາດສະຈາກຕຳໜິເປັນເຄື່ອງບູຊາໄຖ່ບາບ
ແລະພວກປະໂລຫິດຈະຊໍາລະແທ່ນບູຊາ ເໝືອນດັ່ງຊໍາລະດ້ວຍງົວເຖິກ [23]ເມື່ອເຈົ້າໄດ້ຊໍາລະ
ແທ່ນສຳເລັດແລ້ວ ເຈົ້າຈົ່ງຖວາຍງົວໜຸ່ມປາດສະຈາກຕຳໜິ ແລະແກະຜູ້ທີ່ປາດສະຈາກຕຳໜິ
ຈາກຝູງ [24]ເຈົ້າຈົ່ງນໍາມາຖວາຍຕໍ່ພຣະພັກພຣະຜູ້ເປັນເຈົ້າ ປະໂລຫິດຈະເອົາເກືອໂຮຍລົງເທິງ
ສັດນັ້ນ ແລະຈະຖວາຍເປັນເຄື່ອງເຜົາບູຊາແກ່ພຣະຜູ້ເປັນເຈົ້າ

[25]ເຈົ້າຈົ່ງຕຽມແບ້ໂຕໜຶ່ງເປັນເຄື່ອງບູຊາໄຖ່ບາບທຸກວັນຈົນຄົບເຈັດວັນ ແລະພວກປະໂລຫິດ
ຈະຕຽມງົວໜຸ່ມກັບແກະຜູ້ທີ່ປາດສະຈາກຕຳໜິຈາກຝູງດ້ວຍ [26]ພວກເຂົາທັງຫລາຍຈະຕ້ອງເຮັດ
ການລຶບລ້າງມົນທິນແທ່ນບູຊາຢູ່ເຈັດວັນຈຶ່ງຈະຊໍາລະສຳເລັດ ແລະຈະສະຖາປະນາຕົນເອງໄວ້
[27]ແລະເມື່ອພວກເຂົາເຮັດຄົບຕາມກຳນົດເຫລົ່ານີ້ແລ້ວ ຕັ້ງແຕ່ວັນທີແປດເປັນຕົ້ນໄປ ປະໂລຫິດ
ຈະຕ້ອງຖວາຍເຄື່ອງເຜົາບູຊາຂອງເຈົ້າ ແລະເຄື່ອງບູຊາໂມທະນາພຣະຄຸນຂອງເຈົ້າຢູ່ເທິງແທ່ນ
ນັ້ນ ແລະເຮົາຈະພໍພຣະໄທເຈົ້າທັງຫລາຍ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ແຫລະ"

# ບົດທີ 44

## ປະຕູຕາເວັນອອກສະເພາະເຈົ້ານາຍອົງນັ້ນ

[1]ແລ້ວເພິ່ນກໍນໍາຂ້າພະເຈົ້າກັບມາຕາມທາງປະຕູຂອງສະຖານທີ່ບໍລິສຸດພາຍນອກ ຊຶ່ງຫັນໜ້າ
ໄປທາງຕາເວັນອອກ ແລະປະຕູນັ້ນປິດຢູ່ [2]ພຣະຜູ້ເປັນເຈົ້າກ່າວກັບຂ້າພະເຈົ້າວ່າ "ປະຕູນີ້ຈະ
ປິດຢູ່ເລື້ອຍໄປ ຢ່າໃຫ້ໃຜເປີດ ແລະບໍ່ໃຫ້ໃຜເຂົ້າໄປທາງນີ້ ເພາະພຣະຜູ້ເປັນເຈົ້າພຣະເຈົ້າ
ແຫ່ງອິສຣາເອນໄດ້ສະເດັດເຂົ້າໄປທາງນີ້ ເພາະສະນັ້ນ ຈຶ່ງໃຫ້ປິດໄວ້ [3]ສະເພາະເຈົ້ານາຍເທົ່າ
ນັ້ນ ຄືເຈົ້ານາຍ ລາວຈະປະທັບນັ່ງຮັບປະທານອາຫານຕໍ່ພຣະພັກພຣະຜູ້ເປັນເຈົ້າໃນປະຕູນີ້ໄດ້

ລາວຈະຕ້ອງເຂົ້າມາທາງລະບຽງຂອງທັບປະຕູ ແລະຕ້ອງອອກໄປຕາມທາງດຽວກັນ”
[4]ແລ້ວເພິ່ນກໍນໍາຂ້າພະເຈົ້າມາຕາມທາງຂອງປະຕູເໜືອ ມາທີ່ຂ້າງໜ້າພຣະວິຫານ ຂ້າພະເຈົ້າ
ເບິ່ງ ແລະເບິ່ງແມ ສະຫງ່າລາສີຂອງພຣະຜູ້ເປັນເຈົ້າກໍເຕັມພຣະວິຫານຂອງພຣະຜູ້ເປັນເຈົ້າ
ແລະຂ້າພະເຈົ້າກໍກົ້ມໜ້າລົງເຖິງດິນ [5]ພຣະຜູ້ເປັນເຈົ້າກ່າວກັບຂ້າພະເຈົ້າວ່າ “ບຸດແຫ່ງມະນຸດ
ເອີຍ ຈົ່ງຕັ້ງໃຈໃຫ້ດີ ທຸກສິ່ງທີ່ເຮົາຈະບອກເຈົ້າ ກ່ຽວກັບກົດທັງໝົດຂອງພຣະວິຫານຂອງພຣະ-
ຜູ້ເປັນເຈົ້າ ແລະກົດໝາຍທັງໝົດຂອງພຣະວິຫານນັ້ນ ຈົ່ງເບິ່ງດ້ວຍຕາຂອງເຈົ້າ ແລະຟັງດ້ວຍ
ຫູຂອງເຈົ້າ ແລະຈົດຈໍາເລື່ອງທາງເຂົ້າພຣະວິຫານ ແລະທາງອອກຈາກສະຖານທີ່ບໍລິສຸດໃຫ້ດີ
[6]ແລ້ວຈົ່ງບອກແກ່ເຊື້ອສາຍທີ່ມັກກະບົດ ຄືເຊື້ອສາຍອິສຣາເອນວ່າ ອົງພຣະຜູ້ເປັນເຈົ້າພຣະ-
ເຈົ້າກ່າວດັ່ງນີ້ວ່າ ໂອ ເຊື້ອສາຍອິສຣາເອນເອີຍ ຂໍໃຫ້ການອັນໜ້າກຽດຊັງທັງໝົດຂອງເຈົ້າ
ສິ້ນສຸດເຖີດ [7]ຄືການຍິນຍອມໃຫ້ຄົນຕ່າງດ້າວທີ່ບໍ່ໄດ້ເຂົ້າພິທີຕັດທາງຈິດໃຈ ແລະເນື້ອໜັງເຂົ້າ
ມາໃນສະຖານທີ່ບໍລິສຸດຂອງເຮົາ ເຮັດໃຫ້ສະຖານທີ່ນັ້ນມົວໝອງ ຄືພຣະວິຫານຂອງເຮົາ ໃນ
ເມື່ອເຈົ້າຖວາຍອາຫານຂອງເຮົາແກ່ເຮົາ ຄືໄຂມັນ ແລະເລືອດ ເຈົ້າໄດ້ທໍາລາຍຄໍາໝັ້ນສັນຍາ
ຂອງເຮົາດ້ວຍການອັນໜ້າກຽດຊັງທັງໝົດຂອງເຈົ້າ [8]ແລະເຈົ້າບໍ່ໄດ້ດູແລຮັກສາສິ່ງບໍລິສຸດຂອງ
ເຮົາ ແຕ່ເຈົ້າໄດ້ຕັ້ງຄົນເຝົ້າໃຫ້ດູແລຮັກສາຢູ່ໃນສະຖານທີ່ບໍລິສຸດຂອງເຮົາ ເພື່ອປະໂຫຍດແກ່
ຕົວເຈົ້າເອງ

## ພວກປະໂລຫິດຂອງພຣະວິຫານໃນອະນາຄົດ

[9]ອົງພຣະຜູ້ເປັນເຈົ້າພຣະເຈົ້າຈຶ່ງກ່າວດັ່ງນີ້ວ່າ ຢ່າໃຫ້ຄົນຕ່າງດ້າວ ທີ່ບໍ່ໄດ້ເຂົ້າພິທີຕັດທາງ
ຈິດໃຈ ແລະເນື້ອໜັງຄື ຄົນຕ່າງດ້າວທັງໝົດທີ່ຢູ່ທ່າມກາງຊົນຊາດອິສຣາເອນເຂົ້າໄປໃນສະ-
ຖານທີ່ບໍລິສຸດຂອງເຮົາ
[10]ແຕ່ຄົນເລວີຜູ້ທີ່ໄດ້ໄປໄກຈາກເຮົາ ຫລົງໄປຈາກເຮົາໄປຕິດຕາມຮູບເຄົາລົບຂອງເຂົາ ເມື່ອ
ຄົນອິສຣາເອນຫລົງໄປນັ້ນ ຈະຕ້ອງໄດ້ຮັບໂທດຕາມຄວາມຊົ່ວຊ້າຂອງຕົນ [11]ພວກເຂົາທັງ-
ຫລາຍຈະຕ້ອງບົວລະບັດຢູ່ໃນສະຖານທີ່ບໍລິສຸດຂອງເຮົາ ກວດກາເບິ່ງຢູ່ທີ່ປະຕູພຣະວິຫານ
ແລະປະຕິບັດຢູ່ໃນພຣະວິຫານ ພວກເຂົາຈະຂ້າສັດເປັນເຄື່ອງເຜົາບູຊາ ແລະເຄື່ອງສັດບູຊາໃຫ້
ປະຊາຊົນ ແລະຈະຕ້ອງຄອຍຖ້າເຝົ້າປະຊາຊົນ ເພື່ອຈະຮັບໃຊ້ພວກເຂົາທັງຫລາຍ [12]ເພາະ
ພວກເຂົາໄດ້ບົວລະບັດປະຊາຊົນຢູ່ໜ້າຮູບເຄົາລົບຂອງຕົນ ຈຶ່ງເຮັດໃຫ້ເຊື້ອສາຍອິສຣາເອນຕົກ
ຢູ່ໃນຄວາມຊົ່ວຊ້າ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວວ່າ ເພາະສະນັ້ນ ເຮົາຈຶ່ງໄດ້ປະຕິຍານ
ດ້ວຍເລື່ອງພວກເຂົາວ່າ ພວກເຂົາທັງຫລາຍຈະຕ້ອງໄດ້ຮັບໂທດຕາມຄວາມຊົ່ວຊ້າຂອງຕົນ
[13]ຢ່າໃຫ້ພວກເຂົາເຂົ້າມາໃກ້ເຮົາ ເພື່ອຈະຮັບໃຊ້ເຮົາໃນຕໍາແໜ່ງປະໂລຫິດ ຫລືເຂົ້າມາໃກ້ສິ່ງບໍ-
ລິສຸດທັງຫລາຍຂອງເຮົາໃນບ່ອນບໍລິສຸດທີ່ສຸດນັ້ນ ແຕ່ເຂົາຕ້ອງທົນຮັບຄວາມອັບອາຍຂາຍໜ້າ
ແລະການອັນໜ້າກຽດຊັງຊຶ່ງພວກເຂົາໄດ້ເຮັດນັ້ນ [14]ແຕ່ເຖິງປານນັ້ນ ເຮົາຈະກໍານົດໃຫ້ພວກ
ເຂົາເປັນຜູ້ເບິ່ງແຍງພຣະວິຫານ ໃຫ້ບົວລະບັດທັງໝົດ ແລະເຮັດສິ່ງທີ່ຕ້ອງເຮັດໃນພຣະວິຫານ
ນັ້ນທັງໝົດ
[15]ແຕ່ປະໂລຫິດຄົນເລວີ ບັນດາລູກຊາຍຂອງຊາໂດກ ຜູ້ຍັງເບິ່ງແຍງສະຖານທີ່ບໍລິສຸດຂອງ

ເຮົາ ເມື່ອຄົນອິສຣາເອນຫລົງໄປຈາກເຮົານັ້ນ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວວ່າ ໃຫ້ພວກ
ເຂົາເຂົ້າມາໃກ້ເຮົາເພື່ອບົວລະບັດເຮົາ ແລະໃຫ້ຄອຍຖ້າຮັບໃຊ້ເຮົາ ໃນການຖວາຍໄຂມັນ ແລະ
ເລືອດ 16ພວກເຂົາຈະເຂົ້າມາໃນສະຖານທີ່ບໍລິສຸດຂອງເຮົາໄດ້ ແລະໃຫ້ເຂົ້າມາໃກ້ໂຕະຂອງ
ເຮົາ ເພື່ອຈະບົວລະບັດເຮົາ ໃຫ້ພວກເຂົາຮັກສາຄຳສັ່ງຂອງເຮົາ

17ຕໍ່ມາເມື່ອພວກເຂົາເຂົ້າປະຕູເດີ່ນຊັ້ນໃນນັ້ນ ໃຫ້ພວກເຂົາສວມໃສ່ເສື້ອຜ້າປ່ານ ຢ່າໃຫ້ພວກ
ເຂົາມີສິ່ງໃດທີ່ເຮັດດ້ວຍຂົນແກະໃນຂະນະທີ່ພວກເຂົາເຮັດການບົວລະບັດຢູ່ທີ່ປະຕູເດີ່ນຊັ້ນໃນ
ແລະຢູ່ຂ້າງໃນ 18ໃຫ້ພວກເຂົາສວມໃສ່ຜ້າຄຽນຫົວທີ່ເປັນຜ້າປ່ານໄວ້ເໜືອຫົວ ແລະໃສ່ໂສ້ງຜ້າ
ປ່ານພຽງແອວ ຢ່າໃຫ້ພວກເຂົາຄາດຕົວດ້ວຍສິ່ງໃດທີ່ເຮັດໃຫ້ມີເຫື່ອ 19ແລະເມື່ອພວກເຂົາອອກ
ໄປຍັງເດີ່ນຊັ້ນນອກ ຄືໄປຍັງເດີ່ນພາຍນອກເພື່ອໄປຫາປະຊາຊົນ ໃຫ້ພວກເຂົາຖອດເສື້ອຜ້າຊຸດ
ທີ່ບົວລະບັດງານນັ້ນອອກ ແລະວາງໄວ້ໃນຫ້ອງບໍລິສຸດ ແລ້ວຈຶ່ງສວມໃສ່ເສື້ອຜ້າອື່ນ ຢ້ານວ່າ
ພວກເຂົາຈະນຳຄວາມບໍລິສຸດສັກສິດໄປຕິດຕໍ່ກັບປະຊາຊົນດ້ວຍເສື້ອຜ້າຂອງຕົນ

20ຢ່າໃຫ້ພວກເຂົາແຖຜົມ ຫລືປ່ອຍໃຫ້ມວຍຜົມຍາວ ໃຫ້ພວກເຂົາພຽງແຕ່ມ້ວນຜົມເທິງຫົວ
ຂອງຕົນເທົ່ານັ້ນ 21ເມື່ອປະໂລຫິດເຂົ້າໄປໃນເດີ່ນຊັ້ນໃນຈະດື່ມເຫລົ້າອະງຸ່ນບໍ່ໄດ້ 22ຢ່າໃຫ້ປະ-
ໂລຫິດແຕ່ງງານກັບແມ່ໝ້າຍ ຫລືຍິງທີ່ຖືກປະຮ້າງແລ້ວ ແຕ່ໃຫ້ແຕ່ງງານກັບຍິງພົມມະຈາລີ
ຈາກເຊື້ອສາຍແຫ່ງເຊື້ອສາຍອິສຣາເອນ ຫລືແມ່ໝ້າຍຊຶ່ງເປັນແມ່ໝ້າຍຂອງປະໂລຫິດ 23ພວກ
ເຂົາທັງຫລາຍຈະຕ້ອງສັ່ງສອນປະຊາຊົນຂອງເຮົາເຖິງຄວາມແຕກຕ່າງລະຫວ່າງຂອງບໍລິສຸດ
ແລະຂອງເປັນມົນທິນ ແລະສະແດງໃຫ້ພວກເຂົາສັງເກດໄດ້ວ່າ ອັນໃດເປັນມົນທິນ ແລະອັນ
ໃດບໍ່ເປັນມົນທິນ

24ຖ້າມີຄະດີ ພວກເຂົາຈະຕ້ອງເຮັດໜ້າທີ່ຜູ້ພິພາກສາ ແລະຈະຕ້ອງພິພາກສາຕາມຄຳຕັດສິນ
ຂອງເຮົາ ໃນບັນດາງານເທດສະການຕາມກຳນົດຂອງເຮົານັ້ນ ພວກເຂົາຈະຕ້ອງຮັກສາກົດບັນ-
ຍັດ ແລະກົດເກນຂອງເຮົາ ພວກເຂົາຈະຕ້ອງຮັກສາວັນສະບາໂຕທັງຫລາຍຂອງເຮົາໃຫ້ບໍລິສຸດ

25ຢ່າໃຫ້ພວກເຂົາເຮັດຕົວໃຫ້ເປັນມົນທິນດ້ວຍການເຂົ້າໄປໃກ້ຜູ້ຕາຍ ເວັ້ນແຕ່ເປັນພໍ່ ຫລືແມ່
ຫລືລູກຊາຍ ຫລືລູກສາວ ຫລືພີ່ນ້ອງຜູ້ຊາຍ ຫລືພີ່ນ້ອງຜູ້ຍິງທີ່ບໍ່ມີຜົວ ກໍຈະເຮັດຕົນໃຫ້ເປັນ
ມົນທິນໄດ້ 26ຫລັງຈາກທີ່ພວກເຂົາຮັບການຊຳລະແລ້ວ ມີກຳນົດອີກເຈັດມື້ 27ອົງພຣະຜູ້ເປັນ-
ເຈົ້າພຣະເຈົ້າກ່າວວ່າ ໃນມື້ທີ່ພວກເຂົາເຂົ້າໄປໃນສະຖານທີ່ບໍລິສຸດ ຄືທີ່ເດີ່ນຊັ້ນໃນເພື່ອຈະບົວ-
ລະບັດຢູ່ໃນສະຖານທີ່ບໍລິສຸດ ພວກເຂົາຈະຕ້ອງຖວາຍເຄື່ອງບູຊາໄຖ່ບາບກ່ອນ

28ແລະນັ້ນຈະເປັນມໍລະດົກຂອງພວກເຂົາ ເຮົາເປັນມໍລະດົກຂອງເຂົາ ແລະເຈົ້າຈະບໍ່ຕ້ອງໃຫ້
ພວກເຂົາຖືກຳມະສິດໃດໆໃນອິສຣາເອນ ເຮົາເປັນກຳມະສິດຂອງພວກເຂົາ 29ໃຫ້ພວກເຂົາຮັບ
ປະທານເຄື່ອງບູຊາພືດຜົນເປັນເມັດ ເຄື່ອງບູຊາໄຖ່ບາບ ແລະເຄື່ອງບູຊາໄຖ່ການລະເມີດ ແລະ
ທຸກສິ່ງທີ່ຖວາຍໄວ້ໃນອິສຣາເອນຈະເປັນຂອງພວກເຂົາທັງໝົດ 30ແລະໝາກໄມ້ດີທີ່ສຸດຂອງ
ໝາກໄມ້ລຸ້ນທຳອິດທຸກຊະນິດ ແລະເຄື່ອງຖວາຍທຸກຊະນິດຈາກເຄື່ອງຖວາຍບູຊາທັງໝົດຂອງ
ເຈົ້າຈະເປັນຂອງບັນດາປະໂລຫິດທັງຫລາຍ ເຈົ້າຈົ່ງມອບແປ້ງປຽກຜົນທຳອິດຂອງເຈົ້າໃຫ້ແກ່
ປະໂລຫິດ ເພື່ອວ່າພຣະພອນຈະມີຢູ່ເໜືອຄອບຄົວຂອງເຈົ້າ 31ປະໂລຫິດຈະຕ້ອງບໍ່ຮັບປະທານ

ສິ່ງໃດໆ ບໍ່ວ່າຈະເປັນນົກ ຫລືສັດທີ່ຕາຍເອງ ຫລືຖືກຈິກກັດຕາຍ”

# ບົດທີ 45

## ບໍລິເວນບ່ອນຕັ້ງໄວ້ສະເພາະພຣະເຈົ້າ ແລະພຣະວິຫານ

[1]“ເມື່ອເຈົ້າຈັບສະຫລາກແບ່ງແຜ່ນດິນໃຫ້ເປັນກຳມະສິດນັ້ນ ເຈົ້າຈົ່ງຖວາຍທີ່ດິນສ່ວນໜຶ່ງໄວ້
ເພື່ອພຣະຜູ້ເປັນເຈົ້າ ໃຫ້ເປັນບ່ອນບໍລິສຸດ ຍາວສອງໝື່ນຫ້າພັນສອກ ແລະກວ້າງໜຶ່ງໝື່ນ
ສອກ ຈະເປັນບ່ອນບໍລິສຸດຕະຫລອດບໍລິເວນນັ້ນ [2]ໃນບໍລິເວນນີ້ໃຫ້ມີບ່ອນສີ່ຫລ່ຽມຈັດຕຸລັດ
ບ່ອນໜຶ່ງຍາວຫ້າຮ້ອຍກວ້າງຫ້າຮ້ອຍສອກສຳລັບສະຖານທີ່ບໍລິສຸດ ໃຫ້ມີບໍລິເວນວ່າງໄວ້ໂດຍ
ຮອບອີກຫ້າສິບສອກ [3]ໃນບ່ອນບໍລິສຸດນັ້ນ ເຈົ້າຈົ່ງວັດແທກສ່ວນໜຶ່ງອອກ ຍາວສອງໝື່ນຫ້າ
ພັນສອກ ກວ້າງໜຶ່ງໝື່ນສອກ ໃນບໍລິເວນນີ້ໃຫ້ເປັນບ່ອນຕັ້ງສະຖານທີ່ບໍລິສຸດ ແລະຂອງທີ່ບໍລິ-
ສຸດທີ່ສຸດ [4]ໃຫ້ເປັນສ່ວນແຜ່ນດິນທີ່ບໍລິສຸດ ໃຫ້ເປັນຂອງປະໂລຫິດ ຜູ້ບົວລະບັດຢູ່ໃນສະຖານທີ່
ບໍລິສຸດ ແລະເຂົ້າໃກ້ພຣະຜູ້ເປັນເຈົ້າ ເພື່ອຈະບົວລະບັດພຣະອົງ ໃຫ້ເປັນບ່ອນສຳລັບປຸກບ້ານ
ເຮືອນຂອງພວກເຂົາ ແລະເປັນບ່ອນບໍລິສຸດສຳລັບສະຖານທີ່ບໍລິສຸດ [5]ອີກສ່ວນໜຶ່ງຊຶ່ງຍາວ
ສອງໝື່ນຫ້າພັນສອກ ແລະກວ້າງໜຶ່ງໝື່ນສອກນັ້ນເປັນບ່ອນຂອງຄົນເລວີ ຜູ້ບົວລະບັດຢູ່ທີ່
ພຣະວິຫານ ໃຫ້ເປັນກຳມະສິດຂອງພວກເຂົາ ໃຫ້ມີຫ້ອງຊາວຫ້ອງ
[6]ໃກ້ໆກັບສ່ວນທີ່ຕັ້ງໄວ້ເປັນບ່ອນບໍລິສຸດນັ້ນ ເຈົ້າຈະຕ້ອງກຳນົດທີ່ດິນຕອນໜຶ່ງກວ້າງຫ້າພັນ
ສອກ ຍາວສອງໝື່ນຫ້າພັນສອກ ໃຫ້ເປັນກຳມະສິດຂອງເມືອງ ໃຫ້ເປັນຂອງເຊື້ອສາຍອິສຣາ-
ເອນທັງໝົດ

## ທີ່ດິນສຳລັບເຈົ້ານາຍ

[7]ແຜ່ນດິນທັງສອງຂ້າງບ່ອນບໍລິສຸດ ແລະສ່ວນຂອງເມືອງນັ້ນ ໃຫ້ຍົກເປັນທີ່ດິນຂອງເຈົ້າ
ນາຍຄຽງຂ້າງກັບບ່ອນບໍລິສຸດ ສ່ວນເມືອງດ້ານຕາເວັນຕົກ ແລະຕາເວັນອອກ ມີສ່ວນຍາວເທົ່າ
ກັບສ່ວນທີ່ຍົກໃຫ້ຄົນຕະກູນໜຶ່ງ ຍືດອອກໄປຕາມທາງຕາເວັນຕົກ ແລະທາງຕາເວັນອອກຂອງ
ເຂດແດນແຜ່ນດິນ [8]ໃຫ້ເປັນສ່ວນຂອງເຈົ້ານາຍໃນອິສຣາເອນ ແລະເຈົ້ານາຍຂອງເຮົາຈະບໍ່
ບີບຄັ້ນປະຊາຊົນຂອງເຮົາອີກ ແຕ່ເຈົ້ານາຍເຫລົ່ານັ້ນຈະຍອມໃຫ້ເຊື້ອສາຍອິສຣາເອນໄດ້ແຜ່ນ-
ດິນທີ່ເຫລືອຕາມສ່ວນຕະກູນຂອງຕົນ
[9]ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ ໂອ ບັນດາເຈົ້ານາຍແຫ່ງອິສຣາເອນເອີຍ ພໍສາ
ຈົ່ງຖິ້ມການທາລຸນ ແລະການບີບບັງຄັບເສຍ ແລະເຮັດແຕ່ຄວາມຍຸດຕິທຳ ກັບຄວາມທ່ຽງທຳ
ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວວ່າ ຈົ່ງຢຸດການຂັບໄລ່ປະຊາຊົນຂອງເຮົາໃຫ້ອອກຈາກທີ່ດິນ
ອັນເປັນກຳມະສິດຂອງເຂົາ [10]ເຈົ້າຈົ່ງມີຊິງຊັ່ງທີ່ທ່ຽງຕົງ ເອຟາ ແລະບາດທີ່ທ່ຽງທຳ [11]ເອຟາ
ແລະບາດນັ້ນໃຫ້ເປັນຂະໜາດດຽວກັນ ກ້ອນບາດໜຶ່ງບັນຈຸໜຶ່ງໃນສິບຂອງໂຮເມ ແລະເອຟາກໍ
ບັນຈຸໜຶ່ງໃນສິບຂອງໂຮເມ ໃຫ້ໂຮເມເປັນເຄື່ອງວັດແທກມາດຕະຖານ [12]ເຊເຂໜຶ່ງມີຊາວເກຣະ
ມີເນຂອງເຈົ້າກໍໃຫ້ມີຊາວເຊເຂ ຊາວຫ້າເຊເຂ ແລະສິບຫ້າເຊເຂ
[13]ຕໍ່ໄປນີ້ເປັນກຳນົດເຄື່ອງຖວາຍທີ່ເຈົ້າທັງຫລາຍຈະຕ້ອງຖວາຍ ຄືເຂົ້າເປືອກໂຮເມໜຶ່ງໃຫ້

ຖວາຍໜຶ່ງສ່ວນຫົກ ເອຟາ ເຂົ້າເດືອຍໂຮເມໜຶ່ງໃຫ້ຖວາຍໜຶ່ງສ່ວນຫົກຂອງ ເອຟາ [14]ແລະສ່ວນ
ກຳນົດປະຈຳຂອງນ້ຳມັນ ຄືນ້ຳມັນໜຶ່ງບາດ ນ້ຳມັນໂຄຣະໜຶ່ງຖວາຍໜຶ່ງສ່ວນສິບຂອງບາດ
ໂຄຣະກໍເໝືອນໂຮເມີບັນຈຸສິບບາດ ເພາະສິບບາດເທົ່າກັບໂຮເມ [15]ແກະຝູງສອງຮ້ອຍໂຕກໍໃຫ້
ຖວາຍໂຕໜຶ່ງ ຈາກທົ່ງລ້ຽງສັດອັນອຸດົມຂອງອິສຣາເອນ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວວ່າ
ນີ້ແຫລະເປັນເຄື່ອງຖວາຍສຳລັບເຄື່ອງບູຊາພືດຜົນເປັນເມັດ ເຄື່ອງເຜົາບູຊາ ແລະເຄື່ອງບູຊາ
ເພື່ອຄວາມສາມັກຄີທຳ ເພື່ອເຮັດການລຶບລ້າງມົນທິນໃຫ້ພວກເຂົາທັງຫລາຍ [16]ໃຫ້ປະຊາຊົນ
ທັງໝົດແຫ່ງແຜ່ນດິນນີ້ມອບເຄື່ອງຖວາຍເຫລົ່ານີ້ແກ່ເຈົ້ານາຍແຫ່ງອິສຣາເອນ [17]ໃຫ້ເປັນໜ້າທີ່
ຂອງເຈົ້ານາຍທີ່ຈະຈັດເຄື່ອງເຜົາບູຊາ ເຄື່ອງບູຊາພືດຜົນເປັນເມັດ ເຄື່ອງດື່ມບູຊາ ໃນງານ
ເທດສະການທັງຫລາຍໃນວັນຂຶ້ນຄ່ຳ ແລະສະບາໂຕ ໃນງານເທດສະການທີ່ກຳນົດໄວ້ຂອງ
ເຊື້ອສາຍອິສຣາເອນທັງໝົດ ໃຫ້ພວກເຂົາຈັດເຄື່ອງບູຊາໄຖ່ບາບ ເຄື່ອງບູຊາພືດຜົນເປັນເມັດ
ເຄື່ອງເຜົາບູຊາ ແລະເຄື່ອງບູຊາເພື່ອຄວາມສາມັກຄີທຳ ເພື່ອເຮັດການລຶບລ້າງບາບໃຫ້ແກ່ເຊື້ອ-
ສາຍອິສຣາເອນ

[18]ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ ໃນວັນທີໜຶ່ງຂອງເດືອນທີໜຶ່ງ ເຈົ້າຈົ່ງເອົາງົວ
ໜຸ່ມທີ່ປາດສະຈາກຕຳໜິໂຕໜຶ່ງ ແລະເຈົ້າຈົ່ງຊຳລະສະຖານທີ່ບໍລິສຸດ [19]ໃຫ້ປະໂລຫິດເອົາ
ເລືອດຂອງເຄື່ອງບູຊາໄຖ່ບາບມານຳ ແລະຈົ່ງຊິດໃສ່ເສົາປະຕູພຣະວິຫານ ທີ່ຂັ້ນສີ່ແຈຂອງ
ແທ່ນບູຊາ ແລະເທິງເສົາປະຕູຂອງເດີ່ນຊັ້ນໃນ [20]ໃນວັນທີເຈັດຂອງເດືອນນັ້ນ ເຈົ້າຈົ່ງເຮັດເຊັ່ນ
ດຽວກັນ ເພື່ອຜູ້ໜຶ່ງຜູ້ໃດທີ່ເຮັດບາບດ້ວຍການຫລົງຜິດ ຫລືຄວາມຮູ້ເທົ່າບໍ່ເຖິງການ ເພື່ອວ່າ
ເຈົ້າຈະໄດ້ເຮັດການລຶບລ້າງມົນທິນພຣະວິຫານ

[21]ໃນວັນທີສິບສີ່ຂອງເດືອນຕົ້ນ ເຈົ້າຈົ່ງສະຫລອງເທດສະການປັດສະຄາ ຈົ່ງຮັບປະທານ
ເຂົ້າຈີ່ບໍ່ມີເຊື້ອແປ້ງຕະຫລອດເທດສະການເຈັດມື້ [22]ໃນມື້ນັ້ນ ໃຫ້ເຈົ້ານາຍຈັດຫາງົວໜຸ່ມໂຕໜຶ່ງ
ສຳລັບຕົນເອງ ແລະປະຊາຊົນທັງໝົດແຫ່ງແຜ່ນດິນ ເພື່ອເປັນເຄື່ອງບູຊາໄຖ່ບາບ [23]ແລະໃນ
ເຈັດມື້ທີ່ມີເທດສະການກິນລ້ຽງ ໃຫ້ເຈົ້ານາຍຈັດຫາງົວໜຸ່ມເຈັດໂຕກັບແກະຜູ້ເຈັດໂຕທີ່ປາດສະ
ຈາກຕຳໜິ ໃຫ້ເປັນເຄື່ອງເຜົາບູຊາແດ່ພຣະຜູ້ເປັນເຈົ້າທຸກໆມື້ຕະຫລອດເຈັດມື້ນັ້ນ ແລະຈັດຫາ
ລູກແບ້ຜູ້ໂຕໜຶ່ງທຸກວັນ ໃຫ້ເປັນເຄື່ອງບູຊາໄຖ່ບາບ [24]ແລະໃຫ້ເຈົ້ານາຍຈັດຫາເຄື່ອງບູຊາພືດ
ຜົນເປັນເມັດເອຟາໜຶ່ງຄູ່ກັບງົວເຖິກໜຶ່ງ ແລະເອຟາໜຶ່ງຄູ່ກັບແກະຜູ້ໜຶ່ງ ແລະນ້ຳມັນໜຶ່ງຮິນຕໍ່
ແປ້ງທຸກເອຟາ [25]ໃນວັນທີສິບຫ້າຂອງເດືອນທີເຈັດ ແລະໃນເທດສະການກິນລ້ຽງທັງເຈັດມື້ ໃຫ້
ທ່ານຈັດຫາຂອງເຊັ່ນດຽວກັນສຳລັບເປັນເຄື່ອງບູຊາໄຖ່ບາບ ເຄື່ອງເຜົາບູຊາ ເຄື່ອງບູຊາພືດຜົນ
ເປັນເມັດ ແລະເຄື່ອງນ້ຳມັນ”

# ບົດທີ 46

## ເຈົ້ານາຍກັບປະຊາຊົນນະມັດສະການພ້ອມກັນ

[1]“ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ ປະຕູເດີ່ນຊັ້ນໃນທີ່ຫັນໜ້າໄປທິດຕາເວັນອອກ
ນັ້ນໃຫ້ປິດຢູ່ໃນວັນເຮັດວຽກທັງຫົກວັນ ແຕ່ໃນວັນສະບາໂຕນັ້ນໃຫ້ເປີດ ແລະໃນວັນຂຶ້ນຄ່ຳໜຶ່ງກໍ

ໃຫ້ເປີດ 2ຝ່າຍເຈົ້ານາຍນັ້ນຈະເຂົ້າມາຈາກຂ້າງນອກທາງລະບຽງຂອງທໍປະຕູ ແລະຈະມາຢືນຢູ່
ທີ່ເສົາປະຕູ ພວກປະໂລຫິດຈະຕຽມເຄື່ອງເຜົາບູຊາ ແລະເຄື່ອງບູຊາເພື່ອຄວາມສາມັກຄີທຳຂອງ
ເພິ່ນ ແລະເພິ່ນຈະນະມັດສະການຢູ່ທີ່ທາງເຂົ້າປະຕູ ແລ້ວເພິ່ນຈະອອກໄປ ແຕ່ຢ່າປິດປະຕູນັ້ນ
ຈົນກວ່າຈະຮອດຕອນຄ່ຳ 3ເຊັ່ນດຽວກັນ ປະຊາຊົນແຫ່ງແຜ່ນດິນຈະນະມັດສະການຕໍ່ພຣະພັກ
ພຣະຜູ້ເປັນເຈົ້າຊື່ທີ່ທາງເຂົ້າປະຕູນັ້ນ ໃນວັນສະບາໂຕ ແລະໃນວັນຂຶ້ນຄ່ຳ 4ເຄື່ອງເຜົາບູຊາທີ່
ເຈົ້ານາຍຈະຖວາຍແດ່ພຣະຜູ້ເປັນເຈົ້າໃນວັນສະບາໂຕນັ້ນ ຄືລູກແກະປາດສະຈາກຕຳໜິຫົກ
ໂຕ ແລະແກະຜູ້ປາດສະຈາກຕຳໜິໂຕໜຶ່ງ 5ແລະເຄື່ອງບູຊາພືດຜົນເປັນເມັດທີ່ຄູ່ກັບແກະຜູ້ນັ້ນ
ຄືແປ້ງເອຟາໜຶ່ງ ແລະເຄື່ອງບູຊາພືດຜົນເປັນເມັດທີ່ຄູ່ກັບລູກແກະນັ້ນ ກໍສຸດແຕ່ເພິ່ນຈະສາ-
ມາດຖວາຍໄດ້ ພ້ອມກັບນ້ຳມັນຮິນໜຶ່ງຕໍ່ແປ້ງໜຶ່ງເອຟາ 6ໃນມື້ຂຶ້ນຄ່ຳ ເພິ່ນຈະຖວາຍງົວໜຸ່ມ
ປາດສະຈາກຕຳໜິໂຕໜຶ່ງ ແລະລູກແກະຫົກໂຕກັບແກະຜູ້ໂຕໜຶ່ງ ຊຶ່ງຕ້ອງປາດສະຈາກຕຳໜິ
7ສ່ວນເຄື່ອງບູຊາພືດຜົນເປັນເມັດນັ້ນ ເພິ່ນຈະຈັດແປ້ງໜຶ່ງເອຟາຄູ່ກັບງົວເຖິກໂຕນັ້ນ ແລະໜຶ່ງ
ເອຟາຄູ່ກັບແກະຜູ້ໂຕໜຶ່ງ ແລະຄູ່ກັບລູກແກະ ເພິ່ນຈະຈັດຕາມທີ່ສາມາດຈັດໄດ້ ພ້ອມກັບນ້ຳ-
ມັນໜຶ່ງຮິນຕໍ່ແປ້ງໜຶ່ງເອຟາ 8ເມື່ອເຈົ້ານາຍເຂົ້າມາ ເພິ່ນຈະເຂົ້າໄປທາງລະບຽງຂອງທໍປະຕູ
ແລະກັບອອກໄປຕາມທາງດຽວກັນນັ້ນ

9ເມື່ອປະຊາຊົນແຫ່ງແຜ່ນດິນເຂົ້າມາຕໍ່ພຣະພັກພຣະຜູ້ເປັນເຈົ້າໃນເທດສະການກິນລ້ຽງຕາມ
ກຳນົດ ຜູ້ທີ່ເຂົ້າມາທາງປະຕູເໜືອ ເພື່ອນະມັດສະການຈະຕ້ອງກັບອອກໄປທາງປະຕູໃຕ້ ແລະ
ຜູ້ທີ່ເຂົ້າມາທາງປະຕູໃຕ້ຈະຕ້ອງກັບອອກໄປທາງປະຕູເໜືອ ຢ່າໃຫ້ໃຜກັບທາງປະຕູເກົ່າທີ່ຕົນ
ເຂົ້າມາ ແຕ່ໃຫ້ທຸກຄົນອອກຊື່ໄປທາງໜ້າ 10ເມື່ອປະຊາຊົນເຂົ້າໄປ ເຈົ້ານາຍຈະເຂົ້າໄປພ້ອມ
ກັນດ້ວຍ ແລະເມື່ອປະຊາຊົນອອກໄປ ເຈົ້ານາຍຈະອອກໄປດ້ວຍ

11ເຄື່ອງບູຊາພືດຜົນເປັນເມັດທີ່ໃຊ້ໃນເທດສະການກິນລ້ຽງ ແລະເທດສະການກິນທີ່ກຳນົດ
ນັ້ນ ໃຫ້ເປັນເອຟາໜຶ່ງຄູ່ກັບງົວໜຸ່ມໂຕໜຶ່ງ ແລະຄູ່ກັບແກະຜູ້ກໍເອຟາໜຶ່ງ ແລະຄູ່ກັບລູກແກະ
ກໍຕາມ ແຕ່ເພິ່ນສາມາດຈະຖວາຍໄດ້ ພ້ອມກັບນ້ຳມັນຮິນໜຶ່ງຕໍ່ແປ້ງເອຟາໜຶ່ງ 12ເມື່ອເຈົ້ານາຍ
ຖວາຍເຄື່ອງບູຊາຕາມໃຈສະໝັກ ຈະເປັນເຄື່ອງເຜົາບູຊາ ຫລືເຄື່ອງບູຊາເພື່ອຄວາມສາມັກຄີທຳ
ເປັນເຄື່ອງບູຊາຕາມໃຈສະໝັກຖວາຍແດ່ພຣະຜູ້ເປັນເຈົ້າ ໃຫ້ເປີດປະຕູທີ່ຫັນໜ້າໄປທາງທິດ-
ຕາເວັນອອກໃຫ້ເພິ່ນ ແລະເພິ່ນຈະຕຽມເຄື່ອງເຜົາບູຊາ ແລະເຄື່ອງບູຊາເພື່ອຄວາມສາມັກຄີທຳ
ຂອງເພິ່ນ ເໝືອນທີ່ເພິ່ນເຮັດໃນວັນສະບາໂຕ ແລ້ວເພິ່ນຈະອອກໄປ ເມື່ອເພິ່ນອອກໄປແລ້ວກໍ
ໃຫ້ປິດປະຕູ

13ເຈົ້າຈະຈັດການຫາລູກແກະໂຕໜຶ່ງອາຍຸໜຶ່ງປີ ປາດສະຈາກຕຳໜິຖວາຍເປັນເຄື່ອງເຜົາບູ-
ຊາແກ່ພຣະຜູ້ເປັນເຈົ້າເປັນປະຈຳວັນ ເຈົ້າຈະຈັດຫາທຸກໆເຊົ້າ 14ແລະເຈົ້າຈະຈັດຫາເຄື່ອງບູຊາ
ພືດຜົນເປັນເມັດຄູ່ກັນທຸກໆເຊົ້າໜຶ່ງໃນຫົກຂອງເອຟາ ແລະນ້ຳມັນໜຶ່ງໃນສາມຂອງຮິນ ເພື່ອ
ນວດແປ້ງໃຫ້ຊຸ່ມໃຫ້ເປັນເຄື່ອງບູຊາພືດຜົນເປັນເມັດແກ່ພຣະຜູ້ເປັນເຈົ້າ ອັນນີ້ເປັນລະບຽບຕະ-
ຫລອດໄປເປັນນິດ 15ດັ່ງນີ້ແຫລະ ຈະຕ້ອງຈັດຫາລູກແກະ ແລະເຄື່ອງບູຊາພືດຜົນເປັນເມັດ
ພ້ອມກັບນ້ຳມັນທຸກໆເຊົ້າ ເພື່ອເປັນເຄື່ອງເຜົາບູຊາເປັນນິດ

16ອີກ ພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ ຖ້າເຈົ້ານາຍນຳເອົາສ່ວນໜຶ່ງຂອງມໍລະດົກຂອງ
ເພິ່ນມາມອບໃຫ້ແກ່ລູກຊາຍເປັນຂອງຂວັນ ກໍໃຫ້ຂອງນັ້ນຕົກເປັນຂອງລູກຊາຍຂອງເພິ່ນໂດຍ
ມໍລະດົກນັ້ນເປັນຊັບສິນຂອງຕົນຕາມມໍລະດົກ 17ແຕ່ຖ້າເພິ່ນນຳເອົາສ່ວນໜຶ່ງຂອງມໍລະດົກຂອງ
ຕົນມາມອບໃຫ້ຄົນໃຊ້ຂອງເພິ່ນຄົນໜຶ່ງເປັນຂອງຂວັນ ຂອງນັ້ນຈະເປັນຂອງຄົນໃຊ້ຈົນເຖິງປີ
ອິດສະຫລະພາບ ແລ້ວຂອງນັ້ນຈະກັບມາເປັນຂອງເຈົ້ານາຍ ສະເພາະລູກຊາຍຂອງເພິ່ນເທົ່າ
ນັ້ນທີ່ຈະເກັບສ່ວນມໍລະດົກຂອງເພິ່ນມາເປັນຂອງຂວັນໄດ້ 18ຫລາຍກວ່ານັ້ນອີກ ເຈົ້ານາຍຈະ
ຍຶດສິ່ງໃດອັນເປັນມໍລະດົກຂອງປະຊາຊົນບໍ່ໄດ້ ໂດຍໄລ່ປະຊາຊົນອອກໄປຈາກຊັບສິນທີ່ດິນ
ຂອງເຂົາ ແຕ່ເພິ່ນຈະຕ້ອງມອບຊັບສິນຂອງຕົນເອງໃຫ້ເປັນມໍລະດົກແກ່ລູກຊາຍຂອງເພິ່ນ ເພື່ອ
ວ່າຈະບໍ່ມີປະຊາຊົນຂອງເຮົາຈັກຄົນໜຶ່ງທີ່ຕ້ອງຖືກຂັບໄລ່ຈາກກຳມະສິດຂອງຕົນ”
19ແລ້ວເພິ່ນກໍນຳຂ້າພະເຈົ້າມາຕາມທາງເຂົ້າຊຶ່ງຢູ່ຂ້າງປະຕູ ມາຍັງຫ້ອງບໍລິສຸດແຖວເໜືອ
ຊຶ່ງເປັນຂອງປະໂລຫິດ ເບິ່ງແມ ມີບ່ອນໜຶ່ງຢູ່ທັງສອງຂ້າງທາງທິດຕາເວັນຕົກ

## ສະຖານທີ່ສຳລັບການຕົ້ມ ແລະປີ້ງເຄື່ອງບູຊາຕ່າງໆ

20ແລະເພິ່ນກ່າວແກ່ຂ້າພະເຈົ້າວ່າ “ນີ້ເປັນສະຖານທີ່ຊຶ່ງປະໂລຫິດຈະຕ້ອງຕົ້ມເຄື່ອງບູຊາໄຖ່
ການລະເມີດ ແລະເຄື່ອງບູຊາໄຖ່ບາບ ເປັນບ່ອນທີ່ພວກເຂົາຈະປີ້ງເຄື່ອງບູຊາພືດຜົນເປັນເມັດ
ເພື່ອຈະບໍ່ຕ້ອງນຳອອກໄປໃນເດີ່ນຊັ້ນນອກ ອັນເປັນການນຳເອົາຄວາມບໍລິສຸດສັກສິດໄປເຖິງ
ປະຊາຊົນ”
21ແລ້ວເພິ່ນຈຶ່ງນຳຂ້າພະເຈົ້າອອກມາທີ່ເດີ່ນຊັ້ນນອກ ແລະພາຂ້າພະເຈົ້າໄປທີ່ແຈທັງສີ່ຂອງ
ເດີ່ນນັ້ນ ແລະເບິ່ງແມ ຢູ່ແຈເດີ່ນທຸກແຈກໍມີເດີ່ນຢູ່ເດີ່ນໜຶ່ງ 22ຄືຢູ່ແຈທັງສີ່ຂອງເດີ່ນ ມີເດີ່ນ
ນ້ອຍໆຍາວສີ່ສິບສອກ ກວ້າງສາມສິບສອກ ເດີ່ນທັງສີ່ມີຂະໜາດດຽວກັນ 23ພາຍໃນຮອບເດີ່ນ
ທັງສີ່ນັ້ນ ມີສິ່ງທີ່ກໍ່ດ້ວຍປູນເປັນແຖວ ມີເຕົາຢູ່ກົ້ນຂອງສິ່ງທີ່ກໍ່ນັ້ນໂດຍຮອບ 24ແລ້ວເພິ່ນຈຶ່ງ
ກ່າວແກ່ຂ້າພະເຈົ້າວ່າ “ບ່ອນເຫລົ່ານີ້ເປັນບ່ອນສຳລັບການຕົ້ມ ຊຶ່ງຜູ້ບົວລະບັດຢູ່ທີ່ພຣະວິຫານ
ຈະຕົ້ມເຄື່ອງສັດບູຊາຂອງປະຊາຊົນ”

# ບົດທີ 47

## ແມ່ນ້ຳທີ່ໄຫລອອກຈາກພຣະວິຫານຂອງພຣະເຈົ້າ

1ຫລັງຈາກນັ້ນ ເພິ່ນກໍນຳຂ້າພະເຈົ້າກັບມາທີ່ປະຕູພຣະວິຫານ ແລະເບິ່ງແມ ມີນ້ຳໄຫລອອກ
ມາຈາກກ້ອງທາງເຂົ້າປະຕູພຣະວິຫານຊື່ໄປທາງທິດຕາເວັນອອກ ເພາະພຣະວິຫານຫັນໜ້າໄປ
ທາງທິດຕາເວັນອອກ ແລະນ້ຳໄຫລລົງມາຈາກຂ້າງລຸ່ມ ທາງເບື້ອງຂວາຂອງພຣະວິຫານ ທິດ-
ໃຕ້ຂອງແທ່ນບູຊາ 2ແລ້ວເພິ່ນຈຶ່ງນຳຂ້າພະເຈົ້າອອກມາທາງປະຕູເໜືອ ແລະນຳຂ້າພະເຈົ້າ
ອ້ອມໄປພາຍນອກເຖິງປະຕູຊັ້ນນອກ ຊຶ່ງຫັນໜ້າໄປທາງຕາເວັນອອກ ແລະເບິ່ງແມ ນ້ຳນັ້ນ
ອອກມາທາງເບື້ອງຂວາ
3ຊາຍຜູ້ນັ້ນໄດ້ຍ່າງໄປທາງຕາເວັນອອກມີເຊືອກວັດແທກຢູ່ໃນມື ເພິ່ນວັດແທກໄດ້ໜຶ່ງພັນ
ສອກ ແລ້ວນຳຂ້າພະເຈົ້າລຸຍນ້ຳໄປ ນ້ຳເລິກພຽງຂໍ້ຂາ 4ແລ້ວເພິ່ນກໍວັດແທກໄດ້ອີກໜຶ່ງພັນ

ແລ້ວນຳຂ້າພະເຈົ້າລຸຍນ້ຳໄປ ນ້ຳເລິກເຖິງເຂົ່າ ແລ້ວເພິ່ນກໍວັດແທກໄດ້ອີກໜຶ່ງພັນ ແລ້ວນຳ
ຂ້າພະເຈົ້າລຸຍນ້ຳໄປ ນ້ຳນັ້ນເລິກພຽງແອວ [5]ຫລັງຈາກນັ້ນ ເພິ່ນກໍວັດແທກໄດ້ອີກໜຶ່ງພັນ ແລະ
ກາຍເປັນແມ່ນ້ຳທີ່ຂ້າພະເຈົ້າລຸຍຂ້າມບໍ່ໄດ້ ເພາະນ້ຳນັ້ນຂຶ້ນແລ້ວເລິກພໍທີ່ຈະລອຍໄປໄດ້ ເປັນ
ແມ່ນ້ຳທີ່ລຸຍຂ້າມບໍ່ໄດ້ [6]ເພິ່ນເວົ້າກັບຂ້າພະເຈົ້າວ່າ "ບຸດແຫ່ງມະນຸດເອີຍ ເຈົ້າເຫັນສິ່ງນີ້ບໍ"
ແລ້ວເພິ່ນກໍພາຂ້າພະເຈົ້າກັບມາຕາມຝັ່ງແມ່ນ້ຳ [7]ຂະນະທີ່ຂ້າພະເຈົ້າກັບມາ ເບິ່ງແມ ຂ້າພະເຈົ້າ
ເຫັນຕົ້ນໄມ້ຫລວງຫລາຍຢູ່ທີ່ຝັ່ງແມ່ນ້ຳທັງສອງຟາກ [8]ເພິ່ນເວົ້າກັບຂ້າພະເຈົ້າວ່າ "ນ້ຳນີ້ໄຫລຊື່
ໄປທາງທ້ອງຖິ່ນຕາເວັນອອກ ແລະໄຫລລົງໄປເຖິງທະເລຊາຍ ແລ້ວລົງໄປເຖິງທະເລ ແລະ
ເມື່ອນ້ຳນັ້ນໄຫລອອກມາເຖິງນ້ຳທະເລ ນ້ຳນັ້ນກໍກັບຈືດດີ [9]ຕໍ່ມາ ແມ່ນ້ຳນັ້ນໄປເຖິງທີ່ໃດ ບັນ-
ດາສັດມີຊີວິດໃນນ້ຳທີ່ລອຍໄປມາກໍຈະມີຊີວິດໄດ້ ແລະບ່ອນນັ້ນມີປາຫລວງຫລາຍ ເພາະວ່ານ້ຳ
ນີ້ໄປເຖິງບ່ອນໃດ ນ້ຳທະເລກໍຈືດ ແມ່ນ້ຳໄປເຖິງບ່ອນໃດ ທຸກສິ່ງກໍມີຊີວິດ [10]ຕໍ່ມາຊາວຫາປາກໍ
ຈະຢືນຢູ່ທີ່ຂ້າງທະເລ ຈາກ ເອັນ-ເກດີ ເຖິງ ເອັນ-ເອັກລາຢິມ ຈະເປັນບ່ອນສຳລັບຕາກມອງ
ປາໃນບ່ອນນັ້ນຈະມີຫລາຍຊະນິດ ເໝືອນດັ່ງປາໃນທະເລໃຫຍ່ ຄືຈະມີຢ່າງຫລວງຫລາຍ [11]ແຕ່
ບ່ອນເປັນບຶງ ແລະໜອງ ນ້ຳຈະບໍ່ຈືດ ຕ້ອງຖິ້ມໄວ້ໃຫ້ເປັນເກືອ [12]ຕາມຝັ່ງທັງສອງຟາກແມ່ນ້ຳ
ຈະມີຕົ້ນໄມ້ທຸກຊະນິດທີ່ໃຊ້ເປັນອາຫານ ໃບຂອງມັນຈະບໍ່ຫ່ຽວ ແລະໝາກຂອງມັນຈະບໍ່ຂາດ
ແຕ່ຈະເກີດໝາກໃໝ່ທຸກເດືອນ ເພາະວ່ານ້ຳສຳລັບຕົ້ນໄມ້ນັ້ນໄຫລຈາກສະຖານທີ່ບໍລິສຸດ ໝາກ
ໄມ້ນັ້ນໃຊ້ເປັນອາຫານ ແລະໃບກໍໃຊ້ເປັນຢາ"

## ເຂດແດນຂອງແຜ່ນດິນ

[13]ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ "ນີ້ເປັນເຂດແດນຊຶ່ງເຈົ້າຈະໃຊ້ແບ່ງແຜ່ນດິນ
ສຳລັບເປັນມໍລະດົກ ທ່າມກາງອິສຣາເອນທັງສິບສອງຕະກູນ ໂຢເຊັບຈະໄດ້ສອງສ່ວນ [14]ແລະ
ເຈົ້າຈົ່ງແບ່ງໃຫ້ເທົ່າໆກັນ ເຮົາປະຕິຍານທີ່ຈະມອບໃຫ້ແກ່ບັນພະບູລຸດຂອງເຈົ້າ ແລະແຜ່ນດິນ
ນີ້ຈະຕົກແກ່ເຈົ້າເປັນມໍລະດົກຂອງເຈົ້າ

[15]ຕໍ່ໄປນີ້ເປັນເຂດແດນຂອງແຜ່ນດິນນີ້ ທາງທິດເໜືອຈາກທະເລໃຫຍ່ໄປຕາມທາງເມືອງ
ເຮດໂລນ ແລະຕໍ່ໄປຮອດເມືອງເຊດາດ [16]ເມືອງຮຳມາດ ເມືອງເບໂຣທາ ເມືອງສິບຣາຢິມ
ຊຶ່ງຢູ່ລະຫວ່າງເຂດແດນເມືອງດາມາເຊກັບເຂດແດນເມືອງຮຳມາດ ຈົນຮອດເມືອງຮຳມາດ
ຮາເຊີ-ຮັດຕີໂກນ ຊຶ່ງຢູ່ທີ່ເຂດແດນເມືອງຮາອູຣານ [17]ດັ່ງນັ້ນ ເຂດແດນຈະຍາວຈາກທະເລ
ເຖິງເມືອງຮາຊາ-ເອໂນນ ຊຶ່ງຢູ່ທີ່ເຂດແດນທາງເໜືອຂອງເມືອງດາມາເຊ ທາງທິດເໜືອມີເຂດ
ແດນຂອງເມືອງຮຳມາດ ອັນນີ້ເປັນແດນທາງເໜືອ [18]ທາງດ້ານຕາເວັນອອກ ເຂດແດນຈະ
ຍາວຈາກເມືອງຮາອູຣານ ແລະດາມາເຊ ລະຫວ່າງກິເລອາດກັບແຜ່ນດິນອິສຣາເອນ ເລື້ອຍ
ໄປຕາມແມ່ນ້ຳຢໍແດນ ໄປຮອດທະເລດ້ານຕາເວັນອອກ ພວກເຈົ້າທັງຫລາຍຈົ່ງວັດແທກ ນີ້
ເປັນເຂດດ້ານຕາເວັນອອກ [19]ທາງດ້ານໃຕ້ເຂດແດນຈະຍາວຈາກຕາມາ ຈົນຮອດນ້ຳແຫ່ງ
ການໂຕ້ຖຽງໃນເມຣິບາ-ກາເດັດ ແລ້ວເລື້ອຍໄປຕາມແມ່ນ້ຳເຖິງທະເລໃຫຍ່ ອັນນີ້ເປັນເຂດ
ທາງໃຕ້ [20]ທາງດ້ານຕາເວັນຕົກ ທະເລໃຫຍ່ເປັນເຂດແດນເລື້ອຍໄປຈົນຮອດບ່ອນທີ່ຢູ່ກົງກັນ-
ຂ້າມທາງເຂົ້າເມືອງຮຳມາດ ອັນນີ້ເປັນເຂດແດນທາງຕາເວັນຕົກ

[21]ດັ່ງນັ້ນ ເຈົ້າຈົ່ງແບ່ງແຜ່ນດິນນີ້ທ່າມກາງເຈົ້າຕາມຕະກູນອິສຣາເອນ [22]ຕໍ່ມາ ເຈົ້າທັງ-
ຫລາຍຈົ່ງຈັບສະຫລາກແບ່ງສ່ວນທີ່ເປັນມໍລະດົກຂອງຕົວເຈົ້າທັງຫລາຍ ແລະສຳລັບຄົນຕ່າງ
ດ້າວຜູ້ອາໄສຢູ່ທ່າມກາງເຈົ້າ ແລະບັງເກີດລູກຫລານຢູ່ທ່າມກາງເຈົ້າ ພວກເຂົາທັງຫລາຍຈະມີ
ສັນຊາດອິສຣາເອນ ໃຫ້ພວກເຂົາໄດ້ຮັບສ່ວນມໍລະດົກທ່າມກາງຕະກູນອິສຣາເອນພ້ອມກັບ
ເຈົ້າທັງຫລາຍ [23]ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວວ່າ ຕໍ່ມາຄົນຕ່າງດ້າວຈະຢູ່ໃນເຂດຂອງຄົນ
ຕະກູນໃດກໍໄດ້ ເຈົ້າຈົ່ງກຳນົດທີ່ດິນໃຫ້ເປັນມໍລະດົກຂອງພວກເຂົາບ່ອນນັ້ນ”

# ບົດທີ 48

## ການແບ່ງທີ່ດິນໃຫ້ແຕ່ລະຕະກູນ

[1]“ຕໍ່ໄປນີ້ເປັນຊື່ຂອງຕະກູນຕ່າງໆ ຕັ້ງຕົ້ນທີ່ເຂດແດນທາງເໜືອຈາກທະເລໄປຕາມທາງ
ເຮດໂລນ ຮອດທາງເຂົ້າເມືອງຮຳມາດ ຈົນເຖິງຮາຊາ-ເອນັນ ຊຶ່ງຢູ່ທາງເຂດແດນດ້ານເໜືອ
ຂອງດາມາເຊ ຕິດເມືອງຮຳມາດ ແລະຍາວຈາກທາງທິດຕາເວັນຕົກອອກໄປຮອດທາງຕາ-
ເວັນຕົກ ເປັນສ່ວນຂອງຄົນດານ [2]ຕິດກັບເຂດແດນຂອງດານ ຈາກທາງຕາເວັນອອກໄປຮອດ
ທາງຕາເວັນຕົກ ເປັນສ່ວນຂອງຄົນອາເຊ [3]ຕິດກັບເຂດແດນຂອງອາເຊຈາກທາງທິດຕາເວັນ-
ອອກໄປຮອດທາງທິດຕາເວັນຕົກ ເປັນສ່ວນຂອງຄົນນັບທາລີ [4]ຕິດກັບເຂດແດນຂອງນັບທາລີ
ຈາກທິດຕາເວັນອອກໄປຮອດທິດຕາເວັນຕົກ ເປັນສ່ວນຂອງຄົນມານາເຊ [5]ຕິດກັບເຂດແດນ
ຂອງມານາເຊ ຈາກທິດຕາເວັນອອກໄປຮອດທິດຕາເວັນຕົກ ເປັນສ່ວນຂອງຄົນເອຟຣາຢິມ
[6]ຕິດກັບເຂດແດນເອຟຣາຢິມ ຈາກທິດຕາເວັນອອກໄປຮອດທິດຕາເວັນຕົກ ເປັນສ່ວນຂອງຄົນ
ຣູເບັນ [7]ຕິດກັບເຂດແດນຣູເບັນ ຈາກທິດຕາເວັນອອກໄປຮອດທິດຕາເວັນຕົກ ເປັນສ່ວນຂອງ
ຄົນຢູດາ

[8]ຕິດກັບເຂດແດນຢູດາ ຈາກທິດຕາເວັນອອກໄປເຖິງທິດຕາເວັນຕົກ ຈະເປັນສ່ວນຊຶ່ງເຈົ້າຈະ
ຕ້ອງແຍກໄວ້ຕ່າງຫາກ ກວ້າງສອງໝື່ນຫ້າພັນສອກ ແລະຍາວເທົ່າກັບສ່ວນຂອງຄົນຕະກູນໜຶ່ງ
ຈາກທິດຕາເວັນອອກໄປຮອດທິດຕາເວັນຕົກ ເປັນບ່ອນທີ່ມີສະຖານທີ່ບໍລິສຸດຢູ່ກາງ [9]ເປັນສ່ວນ
ທີ່ເຈົ້າທັງຫລາຍຈະແຍກໄວ້ເພື່ອພຣະຜູ້ເປັນເຈົ້າ ໂດຍໃຫ້ມີຄວາມຍາວສອງໝື່ນຫ້າພັນສອກ
ແລະຄວາມກວ້າງໜຶ່ງໝື່ນສອກ

## ສ່ວນແບ່ງສຳລັບພວກປະໂລຫິດກັບຄົນເລວີ

[10]ຕໍ່ໄປນີ້ຈະເປັນສ່ວນແບ່ງຂອງສ່ວນບໍລິສຸດ ຄືປະໂລຫິດຈະໄດ້ສ່ວນແບ່ງໂດຍວັດແທກຈາກ
ທາງທິດເໜືອຍາວສອງໝື່ນຫ້າພັນສອກ ທາງທິດຕາເວັນຕົກກວ້າງໜຶ່ງໝື່ນສອກ ທາງທິດຕາ-
ເວັນອອກກວ້າງໜຶ່ງໝື່ນສອກ ທາງທິດໃຕ້ຍາວສອງໝື່ນຫ້າພັນສອກ ມີສະຖານທີ່ບໍລິສຸດຂອງ
ພຣະຜູ້ເປັນເຈົ້າຢູ່ກາງ [11]ສ່ວນນີ້ໃຫ້ເປັນສ່ວນຂອງປະໂລຫິດທີ່ຊຳລະໄວ້ໃຫ້ບໍລິສຸດ ລູກຊາຍ
ຂອງຊາໂດກ ຜູ້ໄດ້ຮັກສາຄຳສັ່ງຂອງເຮົາ ຜູ້ທີ່ບໍ່ໄດ້ຫລົງໄປເມື່ອປະຊາຊົນອິສຣາເອນຫລົງ
ເໝືອນດັ່ງທີ່ຄົນເລວີຫລົງໄປນັ້ນ [12]ແລະໃຫ້ທີ່ດິນນີ້ຕົກແກ່ພວກເຂົາເປັນສ່ວນໜຶ່ງຈາກສ່ວນ
ຖວາຍຂອງແຜ່ນດິນ ເປັນສະຖານທີ່ບໍລິສຸດທີ່ສຸດ ຕິດກັບເຂດແດນຂອງຄົນເລວີ

[13]ຄຽງຂ້າງກັບເຂດແດນຂອງປະໂລຫິດນັ້ນໃຫ້ຄົນເລວີ ມີສ່ວນແບ່ງຍາວສອງໝື່ນຫ້າພັນ
ສອກ ກວ້າງໜຶ່ງໝື່ນສອກ ຄວາມຍາວທັງໝົດຈະເປັນສອງໝື່ນຫ້າພັນສອກແລະຄວາມກວ້າງ
ໜຶ່ງໝື່ນ [14]ຢ່າໃຫ້ເຂົາຂາຍ ຫລືແລກປ່ຽນສ່ວນໜຶ່ງສ່ວນໃດ ຢ່າໃຫ້ພວກເຂົາປ່ຽນກຳມະສິດທີ່
ດິນດີນີ້ ເພາະເປັນສ່ວນບໍລິສຸດແດ່ພຣະຜູ້ເປັນເຈົ້າ

[15]ສ່ວນທີ່ເຫລືອຢູ່ຊຶ່ງກວ້າງຫ້າພັນສອກ ແລະຍາວສອງໝື່ນຫ້າພັນສອກນັ້ນ ໃຫ້ເປັນທີ່ສາ-
ທາລະນະປະໂຫຍດ ຂອງເມືອງຄື ໃຊ້ເປັນທີ່ຢູ່ອາໄສ ແລະໃຊ້ເປັນທົ່ງຫຍ້າ ໃຫ້ຕົວເມືອງຢູ່
ກາງ [16]ຕໍ່ໄປນີ້ເປັນຂະໜາດຂອງເບື້ອງຕ່າງໆ ທາງທິດເໜືອສີ່ພັນຫ້າຮ້ອຍສອກ ທາງທິດໃຕ້ສີ່
ພັນຫ້າຮ້ອຍສອກ ທາງທິດຕາເວັນອອກສີ່ພັນຫ້າຮ້ອຍ ແລະທາງທິດຕາເວັນຕົກສີ່ພັນຫ້າຮ້ອຍ
[17]ເມືອງນັ້ນຈະຕ້ອງມີທົ່ງຫຍ້າ ທິດເໜືອສອງຮ້ອຍຫ້າສິບສອກ ທິດໃຕ້ສອງຮ້ອຍຫ້າສິບ ທິດ-
ຕາເວັນອອກສອງຮ້ອຍຫ້າສິບ ແລະທິດຕາເວັນຕົກສອງຮ້ອຍຫ້າສິບ [18]ຄວາມຍາວສ່ວນທີ່
ເຫລືອຢູ່ຄຽງຂ້າງກັບສ່ວນບໍລິສຸດນັ້ນ ທິດຕາເວັນອອກຍາວໜຶ່ງໝື່ນສອກ ແລະທິດຕາເວັນຕົກ
ຍາວໜຶ່ງໝື່ນ ແລະໃຫ້ຢູ່ຄຽງຂ້າງກັບສ່ວນບໍລິສຸດ ພືດຜົນທີ່ໄດ້ໃນສ່ວນນີ້ໃຫ້ເປັນອາຫານຂອງ
ຄົນງານໃນເມືອງນັ້ນ [19]ຄົນງານຂອງເມືອງນັ້ນຊຶ່ງມາຈາກອິສຣາເອນທຸກຕະກູນໃຫ້ພວກເຂົາ
ເປັນຄົນໄຖດິນຕອນນີ້ [20]ສ່ວນເຕັມຊຶ່ງເຈົ້າຈະຕ້ອງແບ່ງແຍກໄວ້ນັ້ນ ໃຫ້ເປັນສີ່ຫລ່ຽມຈັດຕຸລັດ
ເບື້ອງລະສອງໝື່ນຫ້າພັນສອກ ນັ້ນຄືສ່ວນບໍລິສຸດລວມກັບສ່ວນຂອງຕົວເມືອງ

## ສ່ວນແບ່ງສຳລັບເຈົ້ານາຍ

[21]ສ່ວນທີ່ເຫລືອຢູ່ທັງສອງຂ້າງຂອງສ່ວນບໍລິສຸດ ແລະສ່ວນຂອງຕົວເມືອງ ໃຫ້ຕົກເປັນຂອງ
ເຈົ້ານາຍ ຍາວຈາກສ່ວນບໍລິສຸດຊຶ່ງຍາວສອງໝື່ນຫ້າພັນສອກໄປຍັງເຂດແດນຕາເວັນອອກ
ແລະທາງທິດຕາເວັນຕົກຈາກສອງໝື່ນຫ້າພັນສອກ ໄປຍັງເຂດແດນຕາເວັນຕົກ ສ່ວນນີ້ໃຫ້ຕົກ
ເປັນຂອງເຈົ້ານາຍ ຈະເປັນສ່ວນບໍລິສຸດ ແລະສະຖານທີ່ບໍລິສຸດຂອງພຣະວິຫານນັ້ນຢູ່ທາງກາງ
[22]ນອກຈາກສ່ວນທີ່ຕົກເປັນຂອງຄົນເລວີ ແລະສ່ວນຂອງເມືອງນັ້ນ ຊຶ່ງຢູ່ກາງສ່ວນອັນຕົກເປັນ
ຂອງເຈົ້ານາຍ ລະຫວ່າງເຂດແດນຢູດາ ແລະເຂດແດນເບັນຢາມິນ ໃຫ້ເປັນສ່ວນຂອງເຈົ້າ
ນາຍທັງໝົດ

[23]ຕະກູນຄົນທີ່ເຫລືອຢູ່ນັ້ນ ຈາກທາງທິດຕາເວັນອອກໄປທາງທິດຕາເວັນຕົກ ເປັນສ່ວນຂອງ
ຄົນເບັນຢາມິນ [24]ຕິດກັບເຂດແດນຂອງເບັນຢາມິນຈາກທາງທິດຕາເວັນອອກໄປຮອດທິດຕາ-
ເວັນຕົກ ເປັນສ່ວນຂອງຄົນຊີເມໂອນ [25]ຕິດກັບເຂດແດນຂອງຊີເມໂອນຈາກທິດຕາເວັນອອກ
ໄປຮອດທິດຕາເວັນຕົກ ເປັນສ່ວນຂອງຄົນອິດຊາຄາ [26]ຕິດກັບເຂດແດນຂອງອິດຊາຄາຈາກ
ທິດຕາເວັນອອກໄປຮອດທິດຕາເວັນຕົກ ເປັນສ່ວນຂອງຄົນເຊບູລູນ [27]ຕິດກັບເຂດແດນຂອງ
ເຊບູລູນຈາກທິດຕາເວັນອອກໄປຮອດທິດຕາເວັນຕົກ ເປັນສ່ວນຂອງຄົນຄາດ [28]ຕິດກັບເຂດ
ແດນຂອງຄາດທາງທິດໃຕ້ເຂດແດນນັ້ນຈະຍື່ນອອກຈາກເມືອງຕາມາ ເຖິງນ້ຳແຫ່ງການໂຕ້
ຖຽງໃນກາເດັດ ແລ້ວເລື້ອຍໄປຕາມແມ່ນ້ຳເຖິງທະເລໃຫຍ່ [29]ອັນນີ້ເປັນແຜ່ນດິນຊຶ່ງເຈົ້າຈະຈັບ
ສະຫລາກແບ່ງໃຫ້ເປັນມໍລະດົກທ່າມກາງຕະກູນຕ່າງໆຂອງອິສຣາເອນ ນີ້ເປັນສ່ວນຕ່າງໆ
ຂອງພວກເຂົາທັງຫລາຍ ອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ແຫລະ

## ເມືອງ ແລະປະຕູຕ່າງໆ

30ຕໍ່ໄປນີ້ເປັນທາງອອກຂອງເມືອງທາງທິດເໜືອຊຶ່ງວັດແທກໄດ້ສີ່ພັນຫ້າຮ້ອຍສອກ 31ປະຕູ
ເມືອງນັ້ນຕັ້ງຊື່ຕາມຊື່ຕະກູນຄົນອິສຣາເອນ ມີປະຕູສາມປະຕູທາງທິດເໜືອ ປະຕູຂອງຣູເບັນ
ປະຕູຂອງຢູດາ ປະຕູຂອງເລວີ 32ທາງທິດຕາເວັນອອກຊຶ່ງຍາວສີ່ພັນຫ້າຮ້ອຍສອກ ມີສາມ
ປະຕູ ປະຕູຂອງໂຢເຊັບ ປະຕູຂອງເບັນຢາມິນ ປະຕູຂອງດານ 33ທາງທິດໃຕ້ຊຶ່ງວັດແທກໄດ້
ສີ່ພັນຫ້າຮ້ອຍສອກ ມີປະຕູສາມປະຕູ ປະຕູຂອງຊີເມໂອນ ປະຕູຂອງອິດຊາຄາ ປະຕູຂອງ
ເຊບູລູນ 34ທາງທິດຕາເວັນຕົກຊຶ່ງຍາວສີ່ພັນຫ້າຮ້ອຍສອກ ມີປະຕູສາມປະຕູ ປະຕູຂອງຄາດ
ປະຕູຂອງອາເຊ ປະຕູຂອງນັບທາລີ 35ວັດແທກຮອບເມືອງນັ້ນໄດ້ໜຶ່ງໝື່ນແປດພັນສອກ ຕັ້ງ-
ແຕ່ນີ້ໄປ ເມືອງນີ້ຈະມີຊື່ວ່າ ພຣະຜູ້ເປັນເຈົ້າສະຖິດບ່ອນນັ້ນ”

* * *

# ດານີເອນ

## ບົດທີ 1

### ເຢົາວະຊົນອິສຣາເອນທີ່ລາຊະສຳນັກ ເນບູກາດເນັດຊາ

[1]ໃນປີທີສາມແຫ່ງລາຊະການ ເຢໂຮຢາກີມ ກະສັດລາຊະອານາຈັກຢູດາ ເນບູກາດເນັດຊາ
ກະສັດລາຊະອານາຈັກ ບາບີໂລນ ໄດ້ເຂົ້າໂຈມຕີນະຄອນ ເຢຣູຊາເລັມ ແລະໄດ້ປິດລ້ອມເມືອງ
ໄວ້. [2]ພຣະຜູ້ເປັນເຈົ້າ ໄດ້ຊົງໃຫ້ ເນບູກາດເນັດຊາ ຈັບເອົາກະສັດ ເຢໂຮຢາກີມ ແລະຍຶດເອົາ
ສິ່ງຂອງບາງຢ່າງຈາກຄັງພຣະວິຫານ ແລ້ວ ເນບູກາດເນັດຊາ ໄດ້ເອົາພວກຊະເລີຍໄປຍັງ ບາບີ-
ໂລນ ແລະເອົາສິ່ງຂອງທີ່ຍຶດໄດ້ນັ້ນໄປເກັບໄວ້ໃນພະຄັງ.

[3]ພະອົງໄດ້ຊົງສັ່ງໃຫ້ ອັດຊະເປນັດ ຫົວໜ້າພະນັກງານ ເລືອກເອົາພວກຊະເລີຍ ອິສຣາເອນ ທີ່
ເປັນຄົນໜຸ່ມບາງຄົນ ຊຶ່ງເປັນເຊື້ອພະວົງ ແລະເຊື້ອສາຍເຈົ້ານາຍ. [4]ຄົນເຫລົ່ານີ້ຈະຕ້ອງເປັນຜູ້
ງາມ ມີສຸຂະພາບສົມບູນ ມີຄວາມສະຫລາດ ໄດ້ຮັບການຝຶກຝົນເປັນຢ່າງດີ ແລະມີປັນຍາ
ຫລັກແຫລມ ເພື່ອວ່າພວກເຂົາຈະໄດ້ມີຄຸນສົມບັດເຂົ້າຮັບໃຊ້ໃນພະລາຊະສຳນັກ ອັດຊະເປນັດ
ຈະເປັນຜູ້ສອນໃຫ້ພວກເຂົາອ່ານ ແລະຂຽນພາສາ ບາບີໂລນ ໄດ້. [5]ພະລາຊາຊົງສັ່ງໃຫ້ນຳເອົາ
ອາຫານ ແລະເຫລົ້າອະງຸ່ນ ທີ່ພະອົງຊົງສະເຫວີຍມາໃຫ້ພວກເຂົາກິນດື່ມທຸກມື້ ໃຫ້ລ້ຽງດູພວກ
ເຂົາຢູ່ເປັນເວລາສາມປີ ແລ້ວພວກເຂົາຈຶ່ງຈະຖືກນຳເຂົ້າເຝົ້າພະລາຊາ. [6]ໃນບັນດາຄົນທີ່ຖືກຄັດ
ເລືອກເຫລົ່ານີ້ມີຊາວ ຢູດາ ຢູ່ນຳ ຄື ດານີເອນ ຮານານີຢາ ມີຊາເອນ ແລະ ອາຊາຣີຢາ. [7]ຫົວ-
ໜ້າພະນັກງານໄດ້ເອີ້ນຊື່ພວກເຂົາໃໝ່ດັ່ງນີ້ ດານີເອນ ເອີ້ນວ່າ ເບນເຕຊັດຊາເຣ ຮານານີຢາ
ເອີ້ນວ່າ ຊັດຣັກ ມີຊາເອນ ເອີ້ນວ່າ ເມຊາກ ແລະ ອາຊາຣີຢາ ເອີ້ນວ່າ ອາເບດເນໂກ.

[8]ດານີເອນ ໄດ້ຕັດສິນໃຈວ່າ ຈະບໍ່ເຮັດຜິດ ພຣະເຈົ້າ ຍ້ອນອາຫານ ແລະນ້ຳອະງຸ່ນຂອງພະ
ລາຊາ ເພິ່ນໄດ້ຂໍຮ້ອງ ອັດຊະເປນັດ ຜູ້ເປັນຫົວໜ້າພະນັກງານໃຫ້ຊ່ອຍເຫລືອຕົນ. [9]ພຣະເຈົ້າ ຈຶ່ງ
ຊົງເຮັດໃຫ້ ອັດຊະເປນັດ ມີເມດຕາຈິດ ແລະສົງສານ ດານີເອນ. [10]ແຕ່ ອັດຊະເປນັດ ບອກ ດານີ-
ເອນ ວ່າ, “ຂ້ອຍຢ້ານພະລາຊາ ພະອົງຊົງສັ່ງໃຫ້ເຈົ້າກິນ ແລະດື່ມຂອງເຫລົ່ານີ້ ຖ້າເຈົ້າບໍ່ຕຸ້ຍພີ
ເໝືອນຄົນໜຸ່ມອື່ນໆ ພະອົງອາດຈະຊົງສັ່ງປະຫານຊີວິດຂ້ອຍກໍໄດ້.”

[11]ດັ່ງນັ້ນ ດານີເອນ ຈຶ່ງໄປຫາຄົນຍາມ ທີ່ ອັດຊະເປນັດ ແຕ່ງໃຫ້ຄວບຄຸມຕົນກັບໝູ່ອີກສາມ
ຄົນນັ້ນ. [12]ເພິ່ນເວົ້າວ່າ, “ຂໍໃຫ້ພວກຂ້ານ້ອຍກິນແຕ່ຜັກກັບນ້ຳລ້າໆລອງເບິ່ງຈັກສິບມື້. [13]ໃຫ້
ທ່ານສັງເກດເບິ່ງພວກຂ້ານ້ອຍກັບຄົນໜຸ່ມທີ່ກິນອາຫານຂອງພະລາຊາ ແລ້ວທ່ານຈຶ່ງຕັດສິນໃຈ
ຕາມທີ່ເຫັນສົມຄວນ.” [14-15]ຄົນຍາມໄດ້ຕົກລົງໃຫ້ພວກເຂົາລອງເບິ່ງສິບມື້ ເມື່ອໝົດກຳນົດສິບມື້
ແລ້ວ ກໍເຫັນວ່າພວກເຂົາມີສຸຂະພາບແຂງແຮງກວ່າພວກທີ່ກິນອາຫານຂອງພະລາຊາ. [16]ດັ່ງ-
ນັ້ນ ຄົນຍາມຈຶ່ງບໍ່ເອົາອາຫານ ແລະນ້ຳອະງຸ່ນຂອງພະລາຊາໃຫ້ພວກເຂົາກິນ ໃຫ້ກິນແຕ່ຜັກ
ກັບນ້ຳລ້າໆ ຕາມທີ່ພວກເຂົາສະເໜີມາ.

[17]ພຣະເຈົ້າໄດ້ຊົງປະທານໃຫ້ພວກຄົນໜຸ່ມສີ່ຄົນນີ້ມີຄວາມຮູ້ ມີຄວາມຊຳນິຊຳນານໃນວັນ-
ນະຄະດີ ແລະປະລັດຊະຍາເປັນຢ່າງດີ ພຣະອົງຊົງໂຜດໃຫ້ດານິເອນ ຊຳນານການແປນິມິດ
ແລະແກ້ຄວາມຝັນ. [18]ເມື່ອຄົບຖ້ວນກຳນົດສາມປີທີ່ພະລາຊາຊົງກຳນົດໄວ້ ອັດຊະເປນັດກໍນຳ
ຄົນໜຸ່ມທັງໝົດເຂົ້າເຝົ້າກະສັດເນບູກາດເນັດຊາ. [19]ພະອົງຊົງສົນທະນາກັບພວກເຂົາ ກໍຊົງ
ເຫັນວ່າ ດານິເອນ ຮານານີຢາ ມີຊາເອນ ແລະອາຊາຣິຢາສະຫລາດກວ່າຄົນອື່ນໆ ດັ່ງນັ້ນ
ພວກເຂົາຈຶ່ງໄດ້ເຂົ້າຮັບລາຊະການໃນພະລາຊະສຳນັກ. [20]ບັນຫາ ຫລືຄຳຖາມທີ່ພະລາຊາຊົງ
ຍົກຂຶ້ນມານັ້ນ ພວກເຂົາຮູ້ໝົດ ພະອົງຈຶ່ງຊົງເຫັນວ່າທັງສີ່ຄົນນີ້ຕອບໄດ້ດີກວ່າພວກໝໍດູ ຫລື
ໝໍມົນໃນລາຊະອານາຈັກຂອງພະອົງເຖິງສິບເທົ່າ. [21]ດານິເອນໄດ້ຮັບລາຊະການເລື້ອຍມາຈົນ
ເຖິງສະໄໝໄຊຣັດເປັນກະສັດ ແຫ່ງລາຊະອານາຈັກບາບີໂລນ.

# ບົດທີ 2

## ພະສຸບິນຂອງກະສັດເນບູກາດເນັດຊາ

[1]ເມື່ອເນບູກາດເນັດຊາຊົງເປັນກະສັດໄດ້ສອງປີ ກໍຊົງຝັນ ອັນເຮັດໃຫ້ເປັນທຸກໃນພະໄທຈົນ
ບັນທົມບໍ່ຫລັບ. [2]ດັ່ງນັ້ນ ພະອົງຈຶ່ງຊົງຮັບສັ່ງໃຫ້ພວກໝໍດູ ໝໍມົນ ໝໍຜີແລະໝໍວິຊາອາຄົມມາ
ທູນຄວາມຝັນນັ້ນແກ່ພະອົງ ເມື່ອພວກເຂົາໄດ້ເຂົ້າມາເຝົ້າພະລາຊາແລ້ວ. [3]ພະອົງຊົງກ່າວຕໍ່
ພວກເຂົາວ່າ, “ເຮົາໄດ້ຝັນບໍ່ດີ ເປັນທຸກໃຈຫລາຍ ເຮົາຢາກຮູ້ວ່າຄວາມຝັນນັ້ນເປັນຢ່າງໃດ.”

[4]ພວກເຂົາໄດ້ຂາບທູນພະລາຊາເປັນພາສາອາຣາມວ່າ, “ຂໍພະອົງຊົງພະຈະເລີນເທີ້ນ ຂໍຊົງ
ເຫລົ່າຄວາມຝັນຂອງພະອົງໃຫ້ພວກຂ້ານ້ອຍຟັງ ເພື່ອພວກຂ້ານ້ອຍຈະໄດ້ທູນຖວາຍຄວາມແກ້
ແດ່ພະອົງ.”

[5]ພະລາຊາຊົງກ່າວຕໍ່ພວກໝໍວິຊາອາຄົມວ່າ, “ເຮົາໄດ້ຕັດສິນໃຈແລ້ວວ່າ ຖ້າພວກເຈົ້າບອກ
ຄວາມຝັນ ແລະແກ້ຄວາມຝັນໃຫ້ເຮົາບໍ່ໄດ້ ເຮົາຈະຂ້າພວກເຈົ້າຢ່າງທາລຸນ ແລະທຳລາຍບ້ານ
ເຮືອນຂອງພວກເຈົ້າຖິ້ມ. [6]ແຕ່ຖ້າພວກເຈົ້າບອກ ແລະແກ້ຄວາມຝັນໃຫ້ເຮົາໄດ້ ເຮົາຈະໃຫ້ລາ-
ງວັນ ແລະກຽດຕິຍົດອັນຍິ່ງໃຫຍ່ແກ່ພວກເຈົ້າ ດັ່ງນັ້ນ ຈົ່ງບອກຄວາມຝັນ ແລະແກ້ຄວາມຝັນ
ໃຫ້ເຮົາເສຍ.”

[7]ພວກເຂົາໄດ້ທູນພະລາຊາອີກວ່າ, “ຖ້າພະອົງຊົງເລົ່າຄວາມຝັນໃຫ້ຂ້ານ້ອຍຮູ້ ພວກຂ້ານ້ອຍ
ຈຶ່ງຈະແກ້ຄວາມຝັນນັ້ນໄດ້.”

[8]ແລ້ວພະລາຊາຊົງກ່າວວ່າ, “ເຮົາຄິດແລ້ວວ່າ ພວກເຈົ້າພະຍາຍາມທ່ວງດຶງເວລາໄວ້ ເພາະ
ພວກເຈົ້າຮູ້ວ່າເຮົາເປັນຄົນຕັດສິນໃຈເດັດຂາດ. [9]ຖ້າພວກເຈົ້າບໍ່ບອກຄວາມຝັນໃຫ້ເຮົາຮູ້ ພວກ
ເຈົ້າກໍຈະໄດ້ຮັບໂທດຢ່າງດຽວກັນ ພວກເຈົ້າໄດ້ພ້ອມໃຈກັນຕົວະຈົນກວ່າເຮົາຈະປ່ຽນໃຈ ແຕ່
ເຮົາຊິບໍ່ປ່ຽນ ຈົ່ງບອກຄວາມຝັນແກ່ເຮົາເສຍ ເຮົາຈຶ່ງຈະຮູ້ວ່າພວກເຈົ້າແກ້ຄວາມຝັນນັ້ນໄດ້.”

[10]ພວກໝໍວິຊາອາຄົມໄດ້ທູນພະລາຊາວ່າ, “ບໍ່ມີຄົນໃດດອກໃນພື້ນພິພົບນີ້ທີ່ສາມາດບອກສິ່ງ
ທີ່ພະອົງຢາກຮູ້ໄດ້ ບໍ່ມີພະລາຊາອົງຍິ່ງໃຫຍ່ ແລະຊົງລິດອົງໃດໄຕ່ຖາມເຊັ່ນນີ້ກັບພວກໝໍດູ
ໝໍມົນ ແລະໝໍວິຊາອາຄົມ. [11]ສິ່ງທີ່ພະລາຊາຖາມມານັ້ນຍາກຫລາຍ ບໍ່ມີໃຜຈະຖວາຍຄຳຕອບ

ແກ່ພະອົງໄດ້ນອກຈາກພວກພະຊຶ່ງບໍ່ໄດ້ເປັນມະນຸດ.” [12]ຍ້ອນການເວົ້າຢ່າງນີ້ ພະລາຊາຈຶ່ງຊົງ
ພິໂລດ ແລະຊົງຮັບສັ່ງໃຫ້ປະຫານຊີວິດພວກໝໍຕ່າງໆ ຊຶ່ງເປັນທີ່ປຶກສາມະຫາກະສັດໃນກຸງ
ບາບີໂລນ. [13]ດັ່ງນັ້ນ ຈຶ່ງມີພະລາຊະອົງການປະກາດອອກໄປວ່າ ໃຫ້ຂ້າພວກລາຊະບັນດິດທັງ
ໝົດ ພ້ອມທັງດານີເອນ ແລະເພື່ອນຝູງຂອງເພິ່ນ.

## ພຣະເຈົ້າຊົງບອກຄຳແກ້ຄວາມຝັນແກ່ດານີເອນ

[14]ຕໍ່ມາ ດານີເອນໄດ້ບອກຢ່າງມີພິກໄຫວແກ່ອາຣີໂອກ ຜູ້ບັນຊາການທະຫານປະຈຳພະລາ-
ຊະວັງ ຜູ້ຊຶ່ງໄດ້ຮັບຄຳສັ່ງໃຫ້ອອກໄປຂ້າທີ່ປຶກສາທັງຫລາຍ. [15]ເພິ່ນໄດ້ຖາມອາຣີໂອກວ່າ,
“ເປັນຫຍັງ ພະລາຊາຈຶ່ງອອກຄຳສັ່ງຮຸນແຮງເຊັ່ນນີ້?” ອາຣີໂອກກໍເລົ່າເລື່ອງທີ່ເກີດຂຶ້ນໃຫ້ດາ-
ນີເອນຮູ້. [16]ດານີເອນໄດ້ເຂົ້າເຝົ້າພະລາຊາໃນທັນທີ ແລະທູນຂໍໃຫ້ພະອົງເລື່ອນກຳນົດເວລາ
ປະຫານ ເພື່ອວ່າເພິ່ນຈະໄດ້ຖວາຍຄຳແກ້ຄວາມຝັນແດ່ພະອົງ.

[17]ແລ້ວດານີເອນໄດ້ກັບຄືນເມືອເຮືອນຂອງຕົນ ບອກເລື່ອງທີ່ເກີດຂຶ້ນໃຫ້ຮານານີຢາ ມີຊາ-
ເອນ ແລະອາຊາຣີຢາ ເພື່ອນຂອງຕົນຮູ້. [18]ເພິ່ນໄດ້ບອກໃຫ້ພວກໝູ່ເພື່ອນອ້ອນວອນ ຂໍໃຫ້
ພຣະເຈົ້າທີ່ຢູ່ເທິງສະຫວັນຊັ້ນຟ້າຊົງໂຜດອະທິບາຍເລື່ອງເລິກລັບນີ້ໃຫ້ແກ່ພວກເຂົາ ເພື່ອພວກ
ເຂົາຈະບໍ່ຖືກຂ້າຕາຍເໝືອນຢ່າງທີ່ປຶກສາຄົນອື່ນໆໃນກຸງບາບີໂລນ. [19]ແລ້ວໃນຄືນນັ້ນ ພຣະ-
ເຈົ້າໄດ້ຊົງເຜີຍເລື່ອງເລິກລັບນີ້ໃຫ້ດານີເອນຮູ້ທາງນິມິດ ດັ່ງນັ້ນ ເພິ່ນຈຶ່ງສັນລະເສີນພຣະເຈົ້າ
ເທິງສະຫວັນຊັ້ນຟ້າວ່າ,

[20] “ຂໍສັນລະເສີນພຣະນາມຂອງພຣະເຈົ້າຕະຫລອດໄປເປັນນິດ
 ພຣະອົງຊົງມີປັນຍາ ແລະມີເດຊານຸພາບ.
[21] ພຣະອົງຊົງຄວບຄຸມກາລະເວລາ ຊົງແຕ່ງຕັ້ງ ແລະປົດພະລາຊາ
 ຊົງປະທານປັນຍາ ແລະຄວາມຮູ້ຮອບດ້ານໃຫ້ມະນຸດ.
[22] ຊົງເປີດເຜີຍສິ່ງເລິກລັບ ແລະລັບລີ້ ຊົງຮູ້ສິ່ງທີ່ຢູ່ໃນຄວາມມືດ
 ແລະຊົງມີແສງສະຫວ່າງຢູ່ອ້ອມຮອບ.
[23] ໂອພຣະເຈົ້າແຫ່ງບັນພະບູລຸດຂອງຂ້ານ້ອຍ
 ຂ້ານ້ອຍສັນລະເສີນ ແລະຖວາຍພຣະກຽດແດ່ພຣະອົງ
ພຣະອົງຊົງປະທານປັນຍາ ແລະກຳລັງໃຫ້ຂ້ານ້ອຍ
 ຊົງຕອບຄຳອ້ອນວອນຂອງຂ້ານ້ອຍ ແລະຊົງໃຫ້ພວກຂ້ານ້ອຍຮູ້ຈັກຕອບພະລາຊາ.

## ດານີເອນບອກ ແລະແກ້ຄວາມຝັນໃຫ້ພະລາຊາ

[24]ຕໍ່ມາ ດານີເອນໄດ້ເຂົ້າໄປຫາອາຣີໂອກ ຜູ້ທີ່ພະລາຊາຊົງແຕ່ງຕັ້ງໃຫ້ຂ້າພວກທີ່ປຶກສາ
ຊາວບາບີໂລນ ເພິ່ນເວົ້າວ່າ, “ຂໍຢ່າຂ້າພວກທີ່ປຶກສາທ້ອນ ໂຜດນຳຂ້ານ້ອຍເຂົ້າໄປເຝົ້າພະລາ-
ຊາແດ່ ຂ້ານ້ອຍຈະແກ້ຄວາມຝັນຖວາຍພະອົງ.”

[25]ແລ້ວອາຣີໂອກກໍຟ້າວນຳຕົວດານີເອນເຂົ້າເຝົ້າພະລາຊາ ແລະທູນພະອົງວ່າ, “ຂ້ານ້ອຍ
ພົບຄົນຢູດາຜູ້ໜຶ່ງ ໃນໝູ່ພວກຊະເລີຍ ລາວສາມາດຈະແກ້ຄວາມຝັນຂອງພະອົງໄດ້.”

[26]ພະລາຊາຊົງກ່າວກັບດານີເອນ (ຜູ້ມີຊື່ອີກຢ່າງໜຶ່ງ ເບນເຕຊັດຊາເຣ) ວ່າ, “ເຈົ້າສາມາດ

ບອກ ແລະແກ້ຄວາມຝັນຂອງເຮົາໄດ້ບໍ?"

[27]ດານີເອນທູນພະລາຊາວາ, "ຂ້າແດ່ພະລາຊາ ບໍ່ມີໝໍວິຊາອາຄົມ ໝໍມົນ ໝໍມໍ ຫລືໝໍດູ
ເລີກຍາມຄົນໃດດອກບອກພະອົງຢ່າງນັ້ນໄດ້. [28]ມີແຕ່ພຣະເຈົ້າເທິງສະຫວັນຊັ້ນຟ້າທີ່ຊົງສາ-
ມາດເປີດເຜີຍຄວາມເລິກລັບທັງຫລາຍໄດ້ ຂ້າແດ່ພະລາຊາ ພຣະເຈົ້າໄດ້ຊົງບອກໃຫ້ພະອົງຮູ້
ສິ່ງທີ່ຈະເກີດຂຶ້ນໃນອະນາຄົດ ຄວາມຝັນ ແລະນິມິດທີ່ເກີດຂຶ້ນໃນຂະນະທີ່ພະອົງຊົງບັນທົມນັ້ນ
ມີດັ່ງນີ້: [29]ຄື ພຣະອົງຊົງຝັນເຖິງເລື່ອງທີ່ຈະເກີດຂຶ້ນໃນອະນາຄົດ ເພາະພຣະເຈົ້າຜູ້ຊົງເປີດ-
ເຜີຍເລື່ອງເລິກລັບ ໄດ້ຊົງສະແດງໃຫ້ພະອົງຮູ້ເຖິງສິ່ງທີ່ຈະເກີດຂຶ້ນ. [30]ເລື່ອງເລິກລັບນີ້ຊົງເຜີຍ
ໃຫ້ຂ້ານ້ອຍຮູ້ ບໍ່ແມ່ນຍ້ອນຂ້ານ້ອຍເປັນຄົນສະຫລາດກວ່າຄົນອື່ນໆດອກ ແຕ່ຍ້ອນພຣະເຈົ້າ
ຢາກໃຫ້ພະລາຊາຮູ້ຄໍາແກ້ຄວາມຝັນ ແລະເຂົ້າໃຈພະດໍາລິໃນພະໄທຂອງພະອົງເອງ.

[31]ຂ້າແດ່ພະລາຊາ ໃນນິມິດຂອງພະອົງນັ້ນ ພະອົງໄດ້ທອດພະເນດເຫັນຮູບຂະໜາດໃຫຍ່
ຢືນຢູ່ຊ້ອງພະພັກ ຮູບນີ້ສ່ອງແສງເຫລື້ອມ ແລະເປັນຕາຢ້ານ. [32]ຫົວຂອງຮູບນີ້ເປັນຄໍາຢ່າງດີທີ່
ສຸດ ເອິກ ແລະແຂນເປັນເງິນ ແອວ ແລະກົກຂາເປັນທອງສໍາລິດ. [33-34]ຂາເປັນເຫລັກ ຕີນ
ເປັນເຫລັກປົນດິນ ຂະນະທີ່ພະອົງທອດພຣະເນດຢູ່ນັ້ນ ມີຫີນໃຫຍ່ກ້ອນໜຶ່ງແຕກອອກມາເອງ
ໂດຍບໍ່ມີໃຜເຮັດ ຫີນນີ້ໄດ້ກະທົບໃສ່ຕີນເຫລັກປົນດິນຂອງຮູບນັ້ນຈົນແຕກມຸ່ນໄປ. [35]ແລ້ວໃນ
ທັນໃດນັ້ນ ສ່ວນເປັນເຫລັກ ເປັນດິນ ເປັນທອງສໍາລິດ ເປັນເງິນ ແລະຄໍາກໍແຕກມຸ່ນໄປເໝືອນ
ເຂົ້າລີບໃນເດີ່ນ ທີ່ລົມພັດປິວໄປໃນຍາມຮ້ອນ ໂດຍບໍ່ມີຮ່ອງຮອຍໃຫ້ພົບເຫັນເລີຍ ແຕ່ກ້ອນຫີນ
ນັ້ນໄດ້ກາຍເປັນພູເຕັມພື້ນພິພົບ ຄວາມຝັນນັ້ນເປັນດັ່ງນີ້ແຫລະ.

[36-37]ຕໍ່ໄປ ຂ້ານ້ອຍຂໍແກ້ໃຫ້ພະອົງຊາບ ຂ້າແດ່ພະລາຊາ ພະອົງຊົງເປັນຈອມລາຊາທັງປວງ
ພຣະເຈົ້າເທິງສະຫວັນຊັ້ນຟ້າໄດ້ຊົງແຕ່ງຕັ້ງໃຫ້ພະອົງເປັນພະລາຊາ ຊົງປະທານລິດອໍານາດ
ແລະກຽດຕິຍົດໃຫ້ພະອົງ. [38]ພຣະເຈົ້າໄດ້ຊົງແຕ່ງຕັ້ງໃຫ້ພະອົງເປັນຜູ້ປົກຄອງຄົນ ຕະຫລອດ
ທັງສັດ ແລະນົກທັງປວງທີ່ອາໄສຢູ່ໃນໂລກ ຫົວຄໍານັ້ນແມ່ນພະອົງເອງ.

[39]ຕໍ່ຈາກພະອົງໄປຈະມີລາຊະອານາຈັກໜຶ່ງອີກ ເປັນລາຊະອານາຈັກນ້ອຍກວ່າຂອງພະອົງ
ແລະຫລັງຈາກນັ້ນແມ່ນລາຊະອານາຈັກທີສາມ ເປັນອານາຈັກທອງສໍາລິດ ຊຶ່ງມີອໍານາດແຜ່ໄປ
ທົ່ວໂລກ. [40]ແລ້ວຈະມີລາຊະອານາຈັກທີ່ສີເປັນອານາຈັກທີ່ມີອໍານາດ ແລະແຂງດັ່ງເຫລັກ ຊຶ່ງ
ສາມາດຕີສິ່ງທັງຫລາຍໃຫ້ຫັກ ແລະແຕກມຸ່ນໄດ້ ລາຊະອານາຈັກນີ້ຈະຫັກ ແລະທັບມ້າງລາຊະ
ອານາຈັກກ່ອນໆທັງປວງ. [41]ທີ່ພະອົງທອດພະເນດເຫັນຕີນ ແລະນິ້ວຕີນເປັນດິນປົນເຫລັກນັ້ນ
ໝາຍຄວາມວ່າຈະເປັນລາຊະອານາຈັກປະສົມ ມັນຈະມີຄວາມແຂງຂອງເຫລັກປົນຢູ່ດ້ວຍ
ເພາະວ່າໄດ້ມີເຫລັກປະສົມຢູ່ກັບດິນໜຽວ. [42]ນິ້ວຕີນເປັນເຫລັກປົນດິນນັ້ນ ໝາຍຄວາມວ່າລາ-
ຊາອານາຈັກນັ້ນຈະແຂງແຮງແຕ່ເສຍຫາຍງ່າຍ. [43]ທີ່ພະອົງທອດພະເນດເຫັນເຫລັກປະສົມດິນ
ໜຽວນັ້ນ ພວກຜູ້ປົກຄອງລາຊະອານາຈັກນັ້ນ ຈະພະຍາຍາມຮວບຮວມຄອບຄົວຂອງພວກເຂົາ
ເຂົ້າກັນດ້ວຍການແຕ່ງງານ ແຕ່ພວກເຂົາຈະເຮັດບໍ່ໄດ້ ຢ່າງດຽວກັນກັບເຫລັກທີ່ປະສົມເຂົ້າກັບ
ດິນບໍ່ໄດ້.

[44]ໃນສະໄໝພະລາຊາເຫລົ່ານັ້ນປົກຄອງຢູ່ ພຣະເຈົ້າເທິງສະຫວັນຊັ້ນຟ້າຈະຊົງຈັດຕັ້ງລາຊະ

ອານາຈັກອັນໜຶ່ງຂຶ້ນ ຊຶ່ງຈະບໍ່ຖືກທຳລາຍ ແລະຈະຕັ້ງຢູ່ຕະຫລອດໄປ ລາຊະອານາຈັກນີ້ຈະບໍ່
ປະລາໄຊ ແຕ່ຈະທຳລາຍລາຊະອານາຈັກອື່ນທັງປວງໃຫ້ໝົດສິ້ນ. [45]ທີ່ພະອົງທອດພະເນດເຫັນ
ກ້ອນຫີນແຕກອອກຈາກພູເອງໂດຍບໍ່ມີໃຜເຮັດ ກ້ອນຫີນນັ້ນໄດ້ກະທົບກັບຮູບເຫລັກ ຮູບທອງ
ສຳລິດ ຮູບດິນ ຮູບເງິນ ແລະຄຳນັ້ນ ແມ່ນພຣະເຈົ້າອົງຍິ່ງໃຫຍ່ ໄດ້ຊົງບອກສິ່ງທີ່ຈະເກີດຂຶ້ນ
ໃນອານາຄົດໃຫ້ພະລາຊາຊາບ ຂ້ານ້ອຍໄດ້ທູນຖວາຍຄວາມຝັນ ແລະຄຳແກ້ແດ່ພະອົງຢ່າງ
ຖືກຕ້ອງ ແລະເປັນຈິງ.”

## ພະລາຊາຊົງມອບລາງວັນໃຫ້ດານີເອນ

[46]ແລ້ວກະສັດເນບູກາດເນັດຊາໄດ້ຊົງຂາບລົງຕໍ່ໜ້າດານີເອນ ຊົງສັ່ງໃຫ້ນຳເຄື່ອງເຜົາບູຊາ
ແລະເຄື່ອງຫອມບູຊາມາມອບໃຫ້ດານີເອນ. [47]ພະລາຊາຊົງກ່າວວ່າ, “ພຣະເຈົ້າຂອງເຈົ້າຊົງ
ເປັນພຣະເຈົ້າຂອງພະໃດໆ ແລະຂອງພະລາຊາທັງປວງ ແລະຊົງເປັນຜູ້ເຜີຍຄວາມເລິກລັບ
ເພາະວ່າເຈົ້າສາມາດອະທິບາຍຄວາມເລິກລັບນີ້ໄດ້.” [48]ແລ້ວພະລາຊາໄດ້ມອບຕຳແໜ່ງສູງ
ແລະສິ່ງຂອງອັນປະເສີດຫລາຍຢ່າງໃຫ້ແກ່ດານີເອນ ຄືຊົງແຕ່ງຕັ້ງໃຫ້ເປັນຜູ້ປົກຄອງແຂວງ
ບາບີໂລນ ແລະເປັນຫົວໜ້າພວກທີ່ປຶກສາຊາວບາບີໂລນ. [49]ເພື່ອຕອບສະໜອງຄຳທູນຂໍຂອງ
ດານີເອນ ພະລາຊາຊົງແຕ່ງຕັ້ງໃຫ້ຊັດຣັກ ເມຊາກ ແລະອາເບດເນໂກຮັບລາຊະການຢູ່ໃນ
ແຂວງບາບີໂລນ ແລະຍັງຊົງໃຫ້ດານີເອນຮັບຕຳແໜ່ງຢູ່ໃນພະລາຊະສຳນັກຕໍ່ໄປ.

# ບົດທີ 3

## ກະສັດເນບູກາດເນັດຊາ ສັ່ງໃຫ້ທຸກຄົນຂາບໄຫວ້ຮູບຄຳ

[1]ກະສັດເນບູກາດເນັດຊາໄດ້ຊົງສ້າງຮູບຄຳຮູບໜຶ່ງ ສູງຫົກສິບສອກ ແລະກວ້າງຫົກສອກ
ຊົງຕັ້ງໄວ້ຢູ່ທົ່ງພຽງດູຣາໃນແຂວງບາບີໂລນ. [2]ແລ້ວພະອົງຊົງຮັບສັ່ງໃຫ້ບັນດາຂ້າລາຊະການຜູ້
ໃຫຍ່ຂອງພະອົງ ຄື ພວກເຈົ້າອຸປະລາດ ເຈົ້າແຂວງ ຮອງເຈົ້າແຂວງ ຜູ້ປົກຄອງກຳແພງນະ-
ຄອນ ນາຍຄັງ ຜູ້ພິພາກສາ ຕຸລາການ ແລະບັນດາຂ້າລາຊະການຄົນອື່ນໆ ໃນແຂວງທັງໝົດ
ມາຮ່ວມໃນງານສະຫລອງຮູບຄຳທີ່ພະອົງຊົງສ້າງຂຶ້ນ. [3]ແລ້ວບັນດາຂ້າລາຊະການທັງໝົດນີ້ໄດ້
ມາສະຫລອງພ້ອມກັນ ແລະໄດ້ຢືນຢູ່ຕໍ່ໜ້າຮູບຄຳນັ້ນ.

[4]ໂຄສົກຜູ້ໜຶ່ງໄດ້ປະກາດດ້ວຍສຽງອັນດັງວ່າ, “ຄົນທຸກໆປະເທດ ທຸກໆເຊື້ອຊາດ ແລະພາ-
ສາ! [5]ຕໍ່ໄປນີ້ ພວກທ່ານຈະໄດ້ຍິນສຽງເປົ່າແກ ຕິດຕາມດ້ວຍສຽງປີ່ ສຽງພິນ ສຽງກະຈັບປີ່
ແລະສຽງແຄນ ແລ້ວຈະມີສຽງດົນຕີອື່ນໆດັງຂຶ້ນ ເມື່ອໄດ້ຍິນສຽງດົນຕີ ໃຫ້ທ່ານທັງຫລາຍຂາບ
ໄຫວ້ຮູບຄຳທີ່ກະສັດເນບູກາດເນັດຊາຊົງສ້າງນີ້. [6]ຜູ້ໃດບໍ່ຂາບໄຫວ້ຈະຖືກໂຍນເຂົ້າໄປໃນເຕົາ-
ໄຟທັນທີ.”

[7]ດັ່ງນັ້ນ ເມື່ອຄົນທັງຫລາຍໄດ້ຍິນສຽງດົນຕີດັງຂຶ້ນ ຄົນທຸກໆປະເທດ ທຸກໆເຊື້ອຊາດ ແລະ
ພາສາ ກໍຂາບໄຫວ້ຮູບຄຳທີ່ກະສັດເນບູກາດເນັດຊາຊົງສ້າງນັ້ນ.

## ຄົນຢູດາສາມຄົນຖືກຟ້ອງຮ້ອງ

[8]ມີຊາວບາບີໂລນບາງຄົນໄດ້ສວຍໂອກາດນີ້ ກ່າວຟ້ອງຄົນຢູດາ. [9-10]ພວກເຂົາທູນກະສັດ

ເນບູກາດເນັດຊາວ່າ, "ຂໍຊົງພະຈະເລີນເທີ້ນ ພະອົງຊົງອອກຄຳສັ່ງແລ້ວວ່າ ເມື່ອສຽງດົນຕີເລີ່ມ
ດັງຂຶ້ນ ທຸກໆຄົນຈະຕ້ອງຂາບໄຫວ້ຮູບຄຳ ຜູ້ໃດບໍ່ຂາບໄຫວ້ ຈະຕ້ອງຖືກໂຍນເຂົ້າເຕົາໄຟ.
[11-12]ມີຄົນຢູດາບາງຄົນທີ່ພະລາຊາຊົງແຕ່ງຕັ້ງໃຫ້ຮັບລາຊະການຢູ່ໃນແຂວງບາບີໂລນ ຄື ຊັດ-
ຣັກ ເມຊາກ ແລະອາເບດເນໂກ ສາມຄົນນີ້ບໍ່ເຊື່ອຟັງຄຳສັ່ງຂອງພະອົງ ພວກເຂົາບໍ່ນັບຖືພະ
ຂອງພະອົງ ແລະບໍ່ຍອມຂາບໄຫວ້ຮູບທີ່ພະອົງຊົງສ້າງ."

[13]ດ້ວຍເຫດນີ້ ພະລາຊາຈຶ່ງຊົງພິໂລດ ແລະຊົງສັ່ງໃຫ້ນຳຊາຍສາມຄົນນັ້ນມາເຂົ້າເຝົ້າ.
[14]ແລ້ວຊົງຖາມພວກເຂົາວ່າ, "ຊັດຣັກ ເມຊາກ ແລະອາເບດເນໂກ! ພວກເຈົ້າບໍ່ຍອມນັບຖືພະ
ຂອງເຮົາ ແລະບໍ່ຍອມຂາບໄຫວ້ຮູບຄຳທີ່ເຮົາໄດ້ສ້າງຂຶ້ນແມ່ນບໍ? [15]ບັດນີ້ ເມື່ອພວກເຈົ້າໄດ້ຍິນ
ສຽງແກ ສຽງປີ່ ສຽງພິນ ສຽງກະຈັບປີ່ ສຽງແຄນ ແລະສຽງດົນຕີອື່ນໆທັງໝົດ ໃຫ້ພວກເຈົ້າຈົ່ງ
ຂາບໄຫວ້ຮູບຄຳນັ້ນ ຖ້າພວກເຈົ້າບໍ່ຍອມຂາບໄຫວ້ ພວກເຈົ້າຈະຕ້ອງຖືກໂຍນເຂົ້າເຕົາໄຟທັນທີ
ຫລືພວກເຈົ້າຄິດວ່າມີພະອົງອື່ນທີ່ຈະຊ່ອຍພວກເຈົ້າໃຫ້ລອດພົ້ນຈາກອຳນາດຂອງເຮົາບໍ?"

[16]ຊັດຣັກ ເມຊາກ ແລະອາເບດເນໂກທູນພະລາຊາວ່າ, "ຂ້າແດ່ພະລາຊາ ພວກຂ້ານ້ອຍ
ຈະບໍ່ປ້ອງກັນຕົວເອງໄວ້. [17]ຖ້າພຣະເຈົ້າອົງທີ່ພວກຂ້ານ້ອຍຮັບໃຊ້ຢູ່ຊົງພໍພຣະໄທຈະຊ່ອຍພວກ
ຂ້ານ້ອຍ ພຣະອົງກໍຈະຊ່ອຍໃຫ້ພົ້ນຈາກເຕົາໄຟ ແລະພະລາຊະອຳນາດຂອງພະອົງ. [18]ແຕ່ຖ້າ
ພຣະອົງຊ່ອຍຫລືບໍ່ຊ່ອຍກໍຕາມ ຂໍພະອົງຊົງຊາບວ່າ ພວກຂ້ານ້ອຍຈະບໍ່ນັບຖືພະຂອງພະອົງ
ແລະຈະບໍ່ຂາບໄຫວ້ຮູບຄຳທີ່ພະອົງຊົງສ້າງ."

## ຄົນຢູດາຖືກໂຍນເຂົ້າເຕົາໄຟ

[19]ແລ້ວກະສັດເນບູກາດເນັດຊາຊົງພິໂລດຕໍ່ຊັດຣັກ ເມຊາກ ແລະອາເບດເນໂກຢ່າງສຸດ
ຂີດຈົນໜ້າດຳຕາແດງ ພະອົງຊົງສັ່ງໃຫ້ຄົນຂອງພະອົງເຮັດໃຫ້ເຕົາໄຟຮ້ອນຂຶ້ນກວ່າເກົ່າເຖິງ
ເຈັດເທົ່າ. [20]ແລ້ວຊົງສັ່ງໃຫ້ຄົນຜູ້ເຂັ້ມແຂງທີ່ສຸດໃນກອງທັບຂອງພະອົງຜູກຊາຍສາມຄົນນີ້.
[21]ດັ່ງນັ້ນ ພວກເຂົາທັງສາມຈຶ່ງຖືກມັດຄາເຄື່ອງນຸ່ງ ມີເສື້ອຊັ້ນໃນຊັ້ນນອກ ມີໝວກ ແລະເຄື່ອງ
ອື່ນໆ ແລ້ວຖືກໂຍນເຂົ້າໄປໃນເຕົາໄຟ. [22]ເພາະວ່າຄຳສັ່ງຂອງພະລາຊານັ້ນເດັດຂາດ ເຕົາໄຟ
ນັ້ນຮ້ອນທີ່ສຸດ ຈົນພວກທີ່ໂຍນພວກເຂົາເຂົ້າໄປໄດ້ຖືກໄຟໄໝ້ຕາຍ. [23]ຊັດຣັກ ເມຊາກ ແລະ
ອາເບດເນໂກກໍຕົກລົງກາງກອງໄຟທັງໆທີ່ຍັງມັດຢູ່.

[24]ໃນເວລານັ້ນ ກະສັດເນບູກາດເນັດຊາ ໄດ້ຊົງລຸກຂຶ້ນໂດຍໄວຍ້ອນປະຫລາດພະໄທ ແລະ
ຊົງຖາມພວກທີ່ປຶກສາວ່າ, "ພວກເຂົາໄດ້ມັດຊາຍສາມຄົນນັ້ນໂຍນເຂົ້າໄປໃນໄຟບໍ່ແມ່ນບໍ?"

[25]ພະອົງຊົງຖາມອີກວ່າ, "ແລ້ວເປັນຫຍັງເຮົາຈຶ່ງເຫັນຊາຍສີ່ຄົນກຳລັງຍ່າງຢູ່ໃນເຕົາໄຟ
ພວກເຂົາບໍ່ໄດ້ຖືກມັດແລະບໍ່ເຫັນເປັນອັນຕະລາຍຫຍັງເລີຍ ຄົນທີສີ່ຊ້ຳພັດເບິ່ງຄືກັນກັບເທວະ-
ດາ."

## ຄົນຢູດາໄດ້ຮັບການປົດປ່ອຍ ແລະໄດ້ເລື່ອນຊັ້ນ

[26]ແລ້ວກະສັດເນບູກາດເນັດຊາໄດ້ສະເດັດຂຶ້ນເທິງປາກເຕົາໄຟ ແລະຊົງເອີ້ນວ່າ, "ຊັດຣັກ
ເມຊາກ ອາເບດເນໂກ ຜູ້ຮັບໃຊ້ຂອງພຣະເຈົ້າອົງສູງສຸດເອີຍ ຈົ່ງອອກມາສາ" ພວກເຂົາຈຶ່ງ
ໄດ້ອອກມາໃນທັນທີ. [27]ຝ່າຍເຈົ້າອຸປະລາດ ເຈົ້າແຂວງ ຮອງເຈົ້າແຂວງ ແລະພວກທີ່ປຶກສາ

ທັງໝົດໄດ້ພ້ອມກັນມາເບິ່ງຄົນເຫລົ່ານີ້ ຊຶ່ງບໍ່ໄດ້ຮັບອັນຕະລາຍຫຍັງເລີຍ ຜົມ ແລະເຄື່ອງນຸ່ງກໍ
ບໍ່ໄດ້ໄໝ້ ທັງບໍ່ມີກິ່ນຄວັນໄຟໃນຕົນຕົວຂອງພວກເຂົາ. 28ພະລາຊາຊົງກ່າວວ່າ, “ສາທຸການແດ່
ພຣະເຈົ້າຂອງຊັດຣັກ ຂອງເມຊາກ ແລະອາເບດເນໂກ ພຣະອົງຊົງໃຊ້ເທວະດາລົງມາຊ່ອຍ
ຄົນເຫລົ່ານີ້ ຊຶ່ງໄດ້ຮັບໃຊ້ ແລະໄວ້ວາງໃຈໃນພຣະອົງ ພວກເຂົາບໍ່ເຊື່ອຟັງຄຳສັ່ງຂອງເຮົາ
ແລະຍອມສ່ຽງຊີວິດຂອງຕົນດີກວ່າທີ່ຈະຂາບໄຫວ້ພະໃດໆ ເວັ້ນໄວ້ແຕ່ພຣະເຈົ້າຂອງພວກເຂົາ
ເອງ. 29ບັດນີ້ ເຮົາອອກຄຳສັ່ງວ່າ ຖ້າຄົນໃດ ປະເທດໃດ ເຊື້ອຊາດໃດ ຫລືພາສາໃດເວົ້າໝິ່ນ-
ປະໝາດພຣະເຈົ້າຂອງຊັດຣັກ ຂອງເມຊາກ ແລະຂອງອາເບດເນໂກ ຄົນຜູ້ນັ້ນຈະຖືກຂ້າ
ຢ່າງທາລຸນ ແລະທຳລາຍເຮືອນຊານຖິ້ມ ເພາະວ່າບໍ່ມີພະອື່ນໃດທີ່ສາມາດຊ່ອຍໄດ້ເໝືອນ
ພຣະເຈົ້ານີ້.” 30ແລ້ວກະສັດເນບູກາດເນັດຊາ ໄດ້ພະລາຊະທານເລື່ອນຍົດໃຫ້ຊັດຣັກ ໃຫ້ເມ-
ຊາກ ແລະອາເບດເນໂກອີກໃນແຂວງບາບີໂລນ.

# ບົດທີ 4

## ພະສຸບິນເທື່ອທີສອງຂອງກະສັດເນບູກາດເນັດຊາ

1ກະສັດເນບູກາດເນັດຊາຊົງສົ່ງເອກະສານທີ່ມີເນື້ອຄວາມຕໍ່ໄປນີ້ໄປຍັງປະຊາຊົນທຸກໆປະ-
ເທດ ທຸກໆເຊື້ອຊາດ ແລະພາສາທົ່ວໂລກວ່າ:

“ຂໍຄວາມສຸກຄວາມຈະເລີນຈົ່ງມີແດ່ທ່ານທັງຫລາຍ.”

2ຕໍ່ໄປນີ້ ເຮົາຈະບອກທ່ານທັງຫລາຍກ່ຽວກັບໝາຍສຳຄັນ ແລະການອັດສະຈັນ ທີ່ພຣະເຈົ້າ
ອົງສູງສຸດຊົງສະແດງຕໍ່ເຮົາ.

3 ໝາຍສຳຄັນທີ່ພຣະເຈົ້າຊົງສະແດງຕໍ່ເຮົານັ້ນຍິ່ງໃຫຍ່ແທ້ໆ
ການອັດສະຈັນທີ່ພຣະອົງຊົງກະທຳມີລິດທານຸພາບຫລາຍ
ພຣະເຈົ້າຊົງເປັນເຈົ້າຊີວິດຕະຫລອດໄປເປັນນິດ
ແລະຊົງປົກຄອງຕະຫລອດໄປ.

4ເຮົາເນບູກາດເນັດຊາ ໄດ້ມີຊີວິດຢູ່ຢ່າງສະຫງົບງຽບໃນວັງຂອງເຮົາ ມີຄວາມສຸກໃນຊັບ
ສົມບັດອັນຫລວງຫລາຍ. 5ແຕ່ເຮົາຕື່ນຕົກໃຈໃນຄວາມຝັນ ແລະໄດ້ເຫັນນິມິດອັນໜ້າຢ້ານໃນ
ຂະນະທີ່ນອນຫລັບ. 6-7ເຮົາໄດ້ສັ່ງໃຫ້ພວກໝໍດູ ໝໍມົນ ໝໍວິຊາອາຄົມ ແລະໝໍດູເລີກຍາມທັງ
ໝົດໃນກຸງບາບີໂລນມາແກ້ຄວາມຝັນໃຫ້ ພວກເຂົາກໍມາ ເຮົາຈຶ່ງເລົ່າຄວາມຝັນໃຫ້ພວກເຂົາຮູ້
ແຕ່ພວກເຂົາກໍບໍ່ສາມາດແກ້ໄດ້.

8ຕໍ່ມາ ດານີເອນໄດ້ເຂົ້າມາ (ດານີເອນມີຊື່ອີກຊື່ໜຶ່ງວ່າ ເບນເຕຊັດຊາເຣ ຕາມຊື່ພະຂອງ
ເຮົາ) ພຣະວິນຍານບໍລິສຸດຂອງພຣະເຈົ້າສະຖິດຢູ່ນຳລາວ ເຮົາຈຶ່ງບອກຄວາມຝັນຂອງເຮົາໃຫ້
ລາວຮູ້. 9ເຮົາບອກວ່າ ເບນເຕຊັດຊາເຣ ຫົວໜ້າພວກໝໍດູເອີຍ ເຮົາຮູ້ວ່າພຣະວິນຍານບໍລິສຸດ
ສະຖິດຢູ່ນຳເຈົ້າ ແລະຮູ້ວ່າເຈົ້າໄດ້ເຂົ້າໃຈຄວາມເລິກລັບທັງປວງຕໍ່ໄປນີ້ ແມ່ນຄວາມຝັນຂອງ
ເຮົາ ຈົ່ງແກ້ໃຫ້ເຮົາແດ່.

10ຄືໃນຂະນະທີ່ເຮົານອນຫລັບ ເຮົາໄດ້ເຫັນນິມິດອັນໜຶ່ງເປັນຕົ້ນໄມ້ສູງຕັ້ງແຕ່ທ່າມກາງໂລກ

ຕົ້ນໄມ້ນັ້ນສູງຂຶ້ນເລື້ອຍ ຈົນຍອດຈຸຟ້າ. 11ຄົນທຸກໆ ຄົນທົ່ວໂລກສາມາດເຫັນໄດ້. 12ໃບຂອງ
ມັນງົດງາມ ມີໝາກຫລາຍພໍທີ່ຄົນໝົດໂລກຈະກິນອີ່ມ ສັດປ່າທັງຫລາຍໄດ້ອາໄສຢູ່ກ້ອງຮົ່ມເງົາ
ຂອງມັນ ຝູງນົກກໍເຮັດຮັງຢູ່ໃນງ່າ ທັງຄົນ ແລະສັດໄດ້ລ້ຽງຊີບດ້ວຍໝາກຂອງມັນນັ້ນ.

13ຂະນະທີ່ເຮົາຄິດເຖິງນິມິດນັ້ນ ເຮົາໄດ້ເຫັນອາລັກຂາເທວະດາຕົນໜຶ່ງລົງມາຈາກສະຫວັນ
ຊັ້ນຟ້າ. 14ເທວະດາຕົນນີ້ໄດ້ປະກາດດ້ວຍສຽງດັງວ່າ ຈົ່ງບັກຕົ້ນໄມ້ນີ້ ຮານງ່າ, ລິໃບຂອງມັນ
ຖິ້ມ ເຮັດໃຫ້ພວກມັນກະຈັດກະຈາຍໄປ ແລ້ວສັດປ່າກໍຈະໜີອອກຈາກຮົ່ມ ຝູງນົກກໍຈະໜີອອກ
ຈາກງ່າ. 15ແລະໃຫ້ເອົາເຫລັກກັບທອງສຳລິດມັດກົກງູອຕໍມັນປະໄວ້ໃນທົ່ງຫຍ້າ ໃຫ້ນໍ້າໝອກຕົກ-
ລົງມາຖືກຄົນຜູ້ນີ້ ໃຫ້ລາວລ້ຽງຊີບດ້ວຍສັດປ່າ ແລະພືດຜົນ. 16ລາວຈະບໍ່ມີຈິດໃຈມະນຸດເຫລືອ
ຢູ່ອີກ ຈະມີຈິດໃຈສັດປ່າເປັນເວລາເຈັດປີ. 17ຄຳຕັດສິນຂອງອາລັກຂາເທວະດາຕົນນັ້ນເປັນດັ່ງ-
ນີ້ແຫລະ ດັ່ງນັ້ນ ຈົ່ງໃຫ້ຄົນທັງປວງທຸກທີ່ທຸກບ່ອນຮູ້ວ່າ ພຣະເຈົ້າອົງສູງສຸດຊົງມີເດຊານຸພາບ
ເໜືອລາຊະອານາຈັກຂອງມະນຸດ ພຣະອົງຊົງແຕ່ງຕັ້ງກະສັດຂອງຊາດໃດຊາດໜຶ່ງຕາມພຣະ-
ປະສົງຂອງພຣະອົງ ເຖິງແມ່ນວ່າຈະເປັນຄົນຕໍ່າຕ້ອຍກໍຕາມ."

18ກະສັດເນບູກາດເນັດຊາຊົງກ່າວວ່າ, "ຄວາມຝັນຂອງເຮົາເປັນດັ່ງນີ້ແຫລະ ເບນເຕຊັດ-
ຊາເຣເອີຍ ບັດນີ້ ຈົ່ງແກ້ຄວາມຝັນນີ້ໃຫ້ເຮົາແດ່ ບໍ່ມີທີ່ປຶກສາຄົນໃດຂອງເຮົາແກ້ໄດ້ ແຕ່ເຈົ້າ
ນັ້ນອາດສາມາດແກ້ໄດ້ ເພາະວ່າພຣະວິນຍານບໍລິສຸດໄດ້ສະຖິດຢູ່ນຳເຈົ້າ."

## ດານີເອນແກ້ຄວາມຝັນ

19ແລ້ວດານີເອນ (ຜູ້ມີຊື່ອີກຢ່າງໜຶ່ງວ່າ ເບນເຕຊັດຊາເຣ) ກໍອຸກໃຈ ບໍ່ສາມາດຈະເວົ້າອັນ
ໃດໄດ້ ພະລາຊາຊົງກ່າວວ່າ, "ເບນເຕຊັດຊາເຣເອີຍ ຢ່າໃຫ້ຄວາມຝັນແລະສິ່ງທີ່ຈະເກີດຂຶ້ນ
ຕາມນັ້ນ ເຮັດໃຫ້ເຈົ້າຕົກໃຈເລີຍ."

ເບນເຕຊັດຊາເຣທູນຕອບວ່າ, "ຂ້າແດ່ພະລາຊາ ຂໍໃຫ້ຄວາມຝັນ ແລະຄຳແກ້ຄວາມຝັນນັ້ນ
ຕົກຖືກພວກສັດຕູຂອງພະອົງສາ. 20ພະອົງຊົງຝັນເຫັນຕົ້ນໄມ້ໃຫຍ່ສູງຈົນຍອດຈຸຟ້າ ທຸກໆ ຄົນ
ທົ່ວໂລກສາມາດເຫັນໄດ້ 21ໃບຂອງມັນງົດງາມ ແລະໝາກຂອງມັນກໍພໍທີ່ຄົນໝົດໂລກຈະກິນ
ອີ່ມໄດ້ ສັດປ່າທັງຫລາຍອາໄສຢູ່ກ້ອງຮົ່ມເງົາຂອງມັນ ແລະຝູງນົກກໍເຮັດຮັງຢູ່ຕາມກິ່ງກ້ານ.
22ຂ້າແດ່ພະລາຊາ ຕົ້ນໄມ້ນັ້ນໝາຍເຖິງພະອົງຜູ້ຊົງຍິ່ງໃຫຍ່ ແລະເຂັ້ມແຂງ ຄວາມຍິ່ງໃຫຍ່
ຂອງພະອົງສູງສົ່ງຈົນຈຸຟ້າ ແລະພະເດຊານຸພາບກໍແຜ່ກະຈາຍໄປທົ່ວໂລກ.

23ຂະນະທີ່ພະລາຊາຊົງເຝົ້າເບິ່ງ ມີເທວະດາຕົນໜຶ່ງມາຈາກສະຫວັນຊັ້ນຟ້າ ແລະເວົ້າວ່າ
ຈົ່ງບັກຕົ້ນໄມ້ນີ້ ແລະທຳລາຍຖິ້ມ ໃຫ້ປະແຕ່ຕໍມັນໄວ້ໃນດິນ ແລ້ວໃຫ້ເອົາເຫລັກ ແລະທອງສຳ-
ລິດມັດກົກງູອມັນປະໄວ້ບ່ອນນັ້ນໃນທົ່ງນາບ່ອນມີຫຍ້າ ໃຫ້ນໍ້າໝອກຕົກລົງມາຖືກໂຕມັນ ແລະໃຫ້
ມັນຢູ່ທີ່ນັ້ນກັບສັດປ່າເປັນເວລາເຈັດປີ. 24ຂ້າແດ່ພະລາຊາ ການນີ້ແມ່ນພຣະເຈົ້າອົງສູງສຸດຊົງ
ປະກາດສິ່ງທີ່ຈະເກີດຂຶ້ນກັບພະອົງ. 25ຄືພະອົງຈະຖືກຂັບໄລ່ອອກຈາກສັງຄົມມະນຸດ ຈະຊົງມີ
ຊີວິດຢູ່ກັບສັດປ່າ ຈະສະເຫວີຍຫຍ້າແທນອາຫານເໝືອນງົວ ແລະຈະຊົງບັນທົມຫລັບຢູ່ກາງປ່າ
ເປັນເວລາເຈັດປີ ແລ້ວພະອົງຈະຊົງປ່ຽນໃຈຍອມຮັບວ່າ ພຣະເຈົ້າອົງສູງສຸດຊົງປົກຄອງລາຊະ
ອານາຈັກຂອງມະນຸດ ແລະຊົງແຕ່ງຕັ້ງກະສັດທັງປວງຕາມທີ່ພຣະອົງຊົງພໍພຣະໄທ. 26ທີ່ເທ-

ວະດາໄດ້ສັ່ງໃຫ້ຕໍຮາກເຫລືອໄວ້ໃນດິນນັ້ນ ໝາຍຄວາມວ່າພະອົງຈະໄດ້ເປັນກະສັດອີກ ເມື່ອ
ພະອົງຊົງປ່ຽນໃຈຍອມຮັບວ່າພຣະເຈົ້າຊົງປົກຄອງໂລກ. [27]ຂ້າແດ່ພະລາຊາ ດ້ວຍເຫດນີ້ ຂໍຊົງ
ຮັບເອົາຄຳກາບທູນຂອງຂ້ານ້ອຍ ຂໍພະອົງຊົງເລີກເຮັດບາບ ແລະເຮັດແຕ່ຄວາມດີ ຈົ່ງເມດຕາ
ສົງສານຄົນທຸກຍາກ ຍ້ອນການເຮັດດີຢ່າງນີ້ ຈຶ່ງຈະກຳຈັດຄວາມຊົ່ວທີ່ພະອົງຊົງກະທຳມານັ້ນ
ອອກໄດ້ ແລ້ວພະອົງຈະຈຳເລີນຮຸ່ງເຮືອງສືບຕໍ່ໄປ.”

[28-30]ຫລັງຈາກນັ້ນມາໄດ້ສິບສອງເດືອນ ຄວາມຝັນທັງໝົດນີ້ກໍໄດ້ກາຍເປັນຈິງຕໍ່ກະສັດ ເນບູ-
ກາດເນັດຊາ ຄືເມື່ອພະອົງຊົງຍ່າງຢູ່ໃນສວນເທິງຫລັງຄາພະລາຊະວັງກຸງບາບີໂລນ ພະອົງໄດ້
ຊົງກ່າວວ່າ, “ກຸງບາບີໂລນນີ້ເປັນເມືອງໃຫຍ່ຫລາຍ ເຮົາໄດ້ສ້າງມັນມາໃຫ້ເປັນເມືອງຫລວງ
ຂອງເຮົາ ເພື່ອສະແດງເຖິງອຳນາດວາດສະໜາ ແລະກຽດຕິຍົດຊື່ສຽງຂອງເຮົາ.”

[31]ແລ້ວໃນຂະນະທີ່ພະອົງຊົງກຳລັງຍ່າງຢູ່ນັ້ນ ໄດ້ມີພຣະສຸລະສຽງດັ່ງລົງມາຈາກສະຫວັນຊັ້ນ
ຟ້າວ່າ, “ກະສັດ ເນບູກາດເນັດຊາເອີຍ ຈົ່ງຟັງເຮົາເວົ້າ ບັດນີ້ ລາຊະອານາຈັກຂອງເຈົ້າໄດ້
ພາກຈາກເຈົ້າໄປແລ້ວ. [32]ເຈົ້າຈະຖືກຂັບໄລ່ອອກຈາກສັງຄົມມະນຸດ ແລະຈະມີຊີວິດຢູ່ກັບພວກ
ສັດປ່າ ຈະກິນຫຍ້າເໝືອນກັບງົວຢູ່ເປັນເວລາເຈັດປີ ແລ້ວເຈົ້າຈະປ່ຽນໃຈຍອມຮັບວ່າ ພຣະເຈົ້າ
ອົງສູງສຸດຊົງມີລິດອຳນາດເໜືອລາຊະອານາຈັກຂອງມະນຸດ ແລະຍອມຮັບວ່າພຣະອົງຊົງແຕ່ງ-
ຕັ້ງກະສັດຂອງຊາດໃດຊາດໜຶ່ງຕາມທີ່ພຣະອົງຊົງພໍພຣະໄທ.”

[33]ພຣະຄຳນີ້ໄດ້ກາຍເປັນຈິງໃນທັນທີ ຄືກະສັດ ເນບູກາດເນັດຊາ ໄດ້ຖືກຂັບໄລ່ອອກຈາກ
ສັງຄົມມະນຸດ ແລະໄດ້ກິນຫຍ້າເໝືອນດັ່ງງົວ ນ້ຳໝອກໄດ້ຕົກຖືກພະກາຍຂອງພະອົງ ຜົມກໍ
ຍາວເໝືອນຂົນນົກອິນຊີ ແລະເລັບພະຫັດຂອງພະອົງກໍຍາວເໝືອນເລັບນົກ.

## ກະສັດເນບູກາດເນັດຊາສັນລະເສີນພຣະເຈົ້າ

[34]ເມື່ອໝົດກຳນົດເວລານັ້ນແລ້ວ ເຮົາ ເນບູກາດເນັດຊາໄດ້ເງີຍໜ້າຂຶ້ນທ້ອງຟ້າ ແລ້ວຈິດໃຈ
ຂອງເຮົາກໍກັບກາຍເປັນປົກກະຕິ ເຮົາຈຶ່ງກ່າວສັນລະເສີນພຣະເຈົ້າອົງສູງສຸດ ຖວາຍພຣະກຽດ
ແລະສະຫງ່າລາສີແດ່ພຣະອົງຜູ້ຊົງພຣະຊົນຢູ່ເປັນນິດ.

ພຣະອົງຊົງຄອບຄອງຕະຫລອດໄປ
ລາຊະອານາຈັກຂອງພຣະອົງດຳລົງຢູ່ເປັນນິດ.
[35] ພຣະອົງຊົງຖືວ່າຄົນໃນໂລກບໍ່ສຳຄັນຫຍັງ
ເທວະດາຢູ່ເທິງສະຫວັນ ແລະມະນຸດໃນໂລກ
ກໍຢູ່ພາຍໃຕ້ການປົກຄອງຂອງພຣະອົງ
ບໍ່ມີໃຜຈະຂັດຂວາງນ້ຳພຣະໄທຂອງພຣະອົງ
ຫລືຄັດຄ້ານສິ່ງທີ່ພຣະອົງຊົງກະທຳໄດ້.

[36]ເມື່ອຈິດໃຈຂອງເຮົາເປັນປົກກະຕິແລ້ວ ສະຫງ່າລາສີແຫ່ງລາຊະອານາຈັກຂອງເຮົາ ກຽດ-
ຕິຍົດແລະຄວາມຍິ່ງໃຫຍ່ຂອງເຮົາ ໄດ້ຖືກມອບໃຫ້ເຮົາອີກ ພວກທີ່ປຶກສາ ແລະເຈົ້ານາຍຊັ້ນຜູ້
ໃຫຍ່ຂອງເຮົາກໍຍິນດີຕ້ອນຮັບເຮົາ ພະລາຊະອຳນາດຂອງເຮົາກໍໄດ້ຖືກມອບຄືນມາໃຫ້ເຮົາ
ພ້ອມກັບກຽດຕິຍົດອັນຍິ່ງໃຫຍ່ກວ່າແຕ່ກ່ອນ. [37]ບັດນີ້ ເຮົາ ເນບູກາດເນັດຊາຂໍສັນລະເສີນ

ຍ້ອງຍໍ ຖວາຍພຣະກຽດ ແລະສະຫງ່າລາສີແດ່ພຣະເຈົ້າເທິງສະຫວັນຊັ້ນຟ້າ ພຣະອົງຊົງກະ-
ທຳທຸກສິ່ງຖືກຕ້ອງ ການກະທຳຂອງພຣະອົງຍຸດຕິທຳດີສະເໝີ ແລະຊົງເຮັດໃຫ້ບຸກຄົນຜູ້ຈອງ-
ຫອງຖ່ອມຕົວລົງ.

# ບົດທີ 5

## ງານລ້ຽງຂອງເບນຊັດຊາເຣ

[1]ເມື່ອເບນຊັດຊາເຣ ໄດ້ເປັນກະສັດ ພະອົງໄດ້ເຊີນເຈົ້ານາຍໜຶ່ງພັນຄົນ ມາໃນງານລ້ຽງທີ່
ຈັດຂຶ້ນຢ່າງໃຫຍ່ໂຕມະໂຫລານ ແລະໄດ້ສະເຫວີຍນໍ້າອະງຸ່ນກັບພວກເຫລົ່ານັ້ນ. [2]ຂະນະທີ່ພິດ
ເຫລົ້າພວມຂຶ້ນ ຈິ່ງໄດ້ຊົງສັ່ງໃຫ້ເອົາຈອກແລະຖ້ວຍທີ່ເຮັດດ້ວຍເງິນດ້ວຍຄຳມາໃຊ້ ຖ້ວຍເຫລົ່າ
ນີ້ກະສັດເນບູກາດເນັດຊາ ພະລາຊະບິດາຂອງພະອົງໄດ້ເອົາມາຈາກວິຫານໃນນະຄອນເຢຣູ-
ຊາເລັມ ພະອົງໄດ້ຊົງໃຊ້ພວກເຂົາໄປເອົາຈອກ ແລະຖ້ວຍເຫລົ່ານັ້ນມາ ເພື່ອພະອົງພ້ອມທັງ
ມະເຫສີ ກັບພວກເຈົ້ານາຍ ແລະນາງສະໜົມທັງຫລາຍ ຈະໄດ້ດື່ມຈາກພາຊະນະເຫລົ່ານີ້.
[3]ດັ່ງນັ້ນ ຈອກ ແລະຖ້ວຍຄຳ ຈິ່ງຖືກນຳມາໃນທັນທີ ທຸກໆຄົນໄດ້ດື່ມຈາກຈອກເຫລົ່ານີ້. [4]ພວກ
ເຂົາໄດ້ດື່ມເຫລົ້າອະງຸ່ນ ແລະສັນລະເສີນຮູບພະທີ່ເຮັດດ້ວຍຄຳ ເງິນ ທອງສຳລິດ ເຫລັກ ໄມ້
ແລະຫີນ.

[5]ໃນທັນໃດນັ້ນ ມີມືມະນຸດປະກົດໃຫ້ເຫັນ ມືນັ້ນໄດ້ຂຽນໃສ່ຝາພະລາຊະວັງບ່ອນມີໂຄມໄຟ
ໄຕ້ຮຸ່ງຢູ່. [6]ພະລາຊາໄດ້ເຫັນຂະນະທີ່ກຳລັງຂຽນຢູ່ ພະພັກຂອງພະອົງໄດ້ຂາວຊີດ ແລະຕົກ
ພະໄທຫລາຍຈົນຂາສັ່ນ. [7]ພະອົງຈິ່ງຊົງຮ້ອງບອກໃຫ້ຄົນນຳເອົາໝໍມົນ ໝໍວິຊາອາຄົມ ແລະໝໍດູ
ເລີກຍາມເຂົ້າມາເຝົ້າ ເມື່ອພວກເຂົາມາເຖິງ ພະອົງໄດ້ຊົງກ່າວກັບພວກເຂົາວ່າ, “ໃຜອ່ານແລະ
ແປຄວາມໝາຍທີ່ຂຽນນີ້ໄດ້ ຜູ້ນັ້ນຈະໄດ້ຫົ່ມເສື້ອສີມ່ວງ ແຂວນສາຍສ້ອຍຄຳກຽດຕິຍົດ ແລະ
ຈະຖືກແຕ່ງຕັ້ງໃຫ້ເປັນອຸປະລາດໃນລາຊະອານາຈັກ.” [8]ພວກທີ່ປຶກສາທັງໝົດຂອງພະລາຊາຈິ່ງ
ໄດ້ເຂົ້າມາແຕ່ບໍ່ມີໃຜສາມາດອ່ານຄຳຂຽນ ຫລືບອກຄວາມໝາຍໃຫ້ພະລາຊາໄດ້. [9]ດ້ວຍເຫດນີ້
ພະລາຊາຈິ່ງເສຍພະໄທ ແລະມີພະພັກຂາວຊີດ ພວກເຈົ້ານາຍຊັ້ນສູງຂອງພະອົງກໍບໍ່ຮູ້ວ່າຈະ
ເຮັດແນວໃດ.

[10]ເມື່ອພະລາຊະມານດາໄດ້ຍິນສຽງເວົ້າຂອງພະລາຊາ ແລະພວກເຈົ້ານາຍ ພະນາງກໍສະ-
ເດັດເຂົ້າມາໃນຫ້ອງຈັດງານລ້ຽງ ແລ້ວຊົງກ່າວວ່າ, “ຂໍຈົ່ງຊົງພະຈະເລີນເທີ້ນ ຂໍລູກຢ່າໄດ້ຕົກ-
ໃຈຈົນໜ້າຂາວຊີດເລີຍ. [11]ເພາະວ່າລາຊະອານາຈັກຂອງລູກ ຍັງມີຊາຍຜູ້ໜຶ່ງມີພຣະວິນຍານ-
ບໍລິສຸດສະຖິດຢູ່ນຳ ຊາຍຜູ້ນີ້ເມື່ອຄາວພໍ່ຂອງລູກເປັນກະສັດ ລາວໄດ້ສະແດງຄວາມສະຫລາດ
ຫລັກແຫລມ ຄວາມຮອບຮູ້ ແລະສະຕິປັນຍາອັນດີເໝືອນກັບປັນຍາຂອງພຣະເຈົ້າ ກະສັດເນ-
ບູກາດເນັດຊາພະລາຊະບິດາຂອງລູກໄດ້ແຕ່ງຕັ້ງໃຫ້ລາວເປັນຫົວໜ້າພວກໝໍດູ ໝໍມົນ ໝໍວິຊາ
ອາຄົມ ແລະໝໍດູເລີກຍາມ. [12]ລາວມີຄວາມສາມາດທີ່ສຸດ ມີຄວາມສະຫລາດ ແລະຊຳນິຊຳ-
ນານໃນການແກ້ຄວາມຝັນ ແກ້ບັນຫາ ແລະແກ້ຄວາມເລິກລັບທັງຫລາຍໄດ້ ດັ່ງນັ້ນ ຂໍຈົ່ງເອີ້ນ
ເອົາດານີເອນຄົນນີ້ (ຜູ້ຊຶ່ງພະລາຊາໄດ້ເອີ້ນລາວວ່າ ເບນເຕຊັດຊາເຣ) ເຂົ້າມາເຝົ້າ ແລ້ວໃຫ້

ລາວບອກຄວາມໝາຍທັງໝົດນີ້ໃຫ້ແກ່ລູກ.”

## ດານີເອນແປຄຳທີ່ຂຽນ

13ດານີເອນໄດ້ຖືກເອີ້ນຕົວມາເຝົ້າພະລາຊາທັນທີ ພະລາຊາຊົງກ່າວຕໍ່ເພິ່ນວ່າ, “ທ່ານແມ່ນ
ດານີເອນບໍ? ແລະເປັນຄົນໜຶ່ງໃນບັນດາພວກຊະເລີຍທີ່ເປັນຊາວຢູດາ ຊຶ່ງພະລາຊະບິດາຂອງ
ເຮົາໄດ້ນຳມາຈາກປະເທດຢູດາແມ່ນບໍ? 14ເຮົາໄດ້ຍິນວ່າພຣະວິນຍານບໍລິສຸດສະຖິດຢູ່ນຳທ່ານ
ແລະທ່ານເປັນຜູ້ຊຳນານ ມີຄວາມຮູ້ ແລະສະຕິປັນຍາຢ່າງແປກປະຫລາດ. 15ພວກທີ່ປຶກສາ
ພວກໝໍມົນໄດ້ເຂົ້າມາອ່ານ ແລະແປຄວາມໝາຍຂໍ້ຂຽນນີ້ໃຫ້ເຮົາຮູ້ ແຕ່ພວກເຂົາກໍບໍ່ສາມາດ
ຄົ້ນຄວ້າຫາຄວາມໝາຍໄດ້. 16ບັດນີ້ ເຮົາໄດ້ຍິນວ່າທ່ານສາມາດຄົ້ນຫາຄວາມໝາຍ ແລະອະ-
ທິບາຍຄວາມເລິກລັບໄດ້ ສະນັ້ນ ຖ້າທ່ານສາມາດອ່ານ ແລະບອກຄວາມໝາຍຂອງຂໍ້ຄວາມນີ້
ໃຫ້ເຮົາຮູ້ໄດ້ ທ່ານຈະໄດ້ຫົ່ມເສື້ອສີມ່ວງ ໃສ່ສາຍຄໍຄຳກຽດຕິຍົດ ແລະຈະໄດ້ເປັນອຸປະລາດໃນ
ລາຊະອານາຈັກ.”

17ດານີເອນໄດ້ທູນຕອບວ່າ, “ຂ້າແດ່ພະລາຊາ ຂໍພະອົງຊົງເກັບຂອງພະລາຊານັ້ນໄວ້ ຈຶ່ງ
ພະລາຊະທານໃຫ້ຜູ້ອື່ນເສຍ ສ່ວນຂ້ານ້ອຍຈະຂໍອ່ານ ແລະທູນຖວາຍຄວາມໝາຍຂໍ້ຄວາມນີ້ໃຫ້
ພະອົງລ້າໆ. 18ຄືພຣະເຈົ້າອົງສູງສຸດໄດ້ຊົງແຕ່ງຕັ້ງເນບູກາດເນັດຊາພະບິດາຂອງພະອົງໃຫ້
ເປັນມະຫາລາຊາ ຊົງປະທານກຽດຕິຍົດ ແລະຊື່ສຽງໃຫ້ພະອົງ. 19ພຣະອົງຈຶ່ງຊົງຍິ່ງໃຫຍ່
ຫລາຍ ຈົນຄົນທຸກປະເທດ ທຸກເຊື້ອຊາດ ແລະພາສາຢ້ານກົວຕົວສັ່ນ ຖ້າພະອົງປະສົງຈະປະ-
ຫານຊີວິດຜູ້ໃດ ກໍຊົງປະຫານໄດ້ໂລດ ຖ້າປະສົງຈະໃຫ້ໃຜມີຊີວິດຢູ່ ກໍຊົງໂປດໃຫ້ຜູ້ນັ້ນມີຊີວິດ
ຢູ່ ຊົງປະທານຍົດ ແລະຖອດຍົດທຸກຄົນໄດ້ຕາມພະປະສົງ. 20ແຕ່ຍ້ອນພະອົງມີຄວາມອວດອົ່ງ
ມີພະໄທແຂງກະດ້າງ ແລະກະທຳການຊົ່ວຮ້າຍ ພະອົງຈຶ່ງຖືກປົດອອກຈາກພະລາຊະບັນລັງ
ແລະສູນເສຍກຽດຕິຍົດ. 21ຊົງຖືກຂັບໄລ່ອອກຈາກສັງຄົມມະນຸດ ແລະມີນ້ຳພະໄທເໝືອນດັ່ງໃຈ
ສັດ ຊົງມີຊີວິດຢູ່ກັບຝູງລໍປ່າ ຊົງກິນຫຍ້າເໝືອນກັບໂຕງົວ ແລະຊົງບັນທົມຫລັບຢູ່ປ່າຈົນຮອດມື້
ພະອົງຊົງປ່ຽນໃຈຍອມຮັບວ່າ ພຣະເຈົ້າອົງສູງສຸດຊົງປົກຄອງລາຊະອານາຈັກຂອງມະນຸດ
ແລະຊົງແຕ່ງຕັ້ງກະສັດທັງປວງຕາມທີ່ພຣະອົງຊົງພໍພຣະໄທ.

22ຂ້າແດ່ເບນຊັດຊາເຣ ພະລາຊະໂອລົດຂອງກະສັດເນບູກາດເນັດຊາ ແຕ່ພະອົງນັ້ນ ເຖິງ
ແມ່ນວ່າຊົງຊາບເລື່ອງນີ້ແລ້ວກໍຕາມ ກໍບໍ່ໄດ້ຖ່ອມພະໄທເລີຍ. 23ຄື ພະອົງຊົງຖືຕົນວ່າຍິ່ງໃຫຍ່
ເທົ່າກັບພຣະຜູ້ເປັນເຈົ້າ ເທິງສະຫວັນຊັ້ນຟ້າ ຊົງນຳເອົາຈອກ ແລະຖ້ວຍມາຈາກວິຫານຂອງ
ພຣະຜູ້ເປັນເຈົ້າ ພະອົງພ້ອມດ້ວຍພວກເຈົ້ານາຍຊັ້ນສູງ ມະເຫສີ ແລະນາງສະໜົມທັງຫລາຍ
ຂອງພະອົງໄດ້ດື່ມເຫລົ້າອະງຸ່ນຈາກຈອກເຫລົ່ານັ້ນ ແລ້ວກ່າວສັນລະເສີນຮູບພະທີ່ເຮັດດ້ວຍຄຳ
ດ້ວຍເງິນ ດ້ວຍທອງສຳລິດ ດ້ວຍເຫລັກ ດ້ວຍໄມ້ ແລະຫີນ ພະເຫລົ່ານີ້ບໍ່ສາມາດຮູ້ເຫັນ ແລະ
ໄດ້ຍິນອັນໃດໄດ້ ແຕ່ພະອົງບໍ່ໄດ້ຖວາຍພຣະກຽດແດ່ພຣະເຈົ້າອົງປົກຄອງຊີວິດຂອງພະອົງ
ແລະປົກຄອງທຸກໆສິ່ງທີ່ພະອົງຊົງກະທຳ. 24ດ້ວຍເຫດນີ້ແຫລະ ພຣະເຈົ້າຈຶ່ງສົ່ງມືມາຂຽນຂໍ້-
ຄວາມເຫລົ່ານີ້.

25ຕໍ່ໄປນີ້ແມ່ນຂໍ້ຄວາມທີ່ຂຽນຄື: ເມເນ ເມເນ ເທເຄລ ແລະ ຟາສິນ. 26ແປຄວາມໝາຍ

ຂອງມັນມີດັ່ງນີ້ ຄຳວ່າ ເມເນ ແມ່ນພຣະເຈົ້າຊົງນັບຄຳນວນມື້ແຫ່ງລາຊະອານາຈັກຂອງພະ
ອົງໄວ້ແລ້ວ ແລະຊົງເຮັດໃຫ້ລາຊະອານາຈັກນັ້ນສິ້ນສຸດລົງ. 27ຄຳວ່າ ເທເຄລ ແມ່ນພະອົງຊົງ
ຖືກຊັ່ງນ້ຳໜັກໃນເຄື່ອງຊັ່ງ ແລະຊົງເຫັນວ່າຍັງເບົາຢູ່ຫລາຍ. 28ຄຳວ່າ ຟາສິນ (ເປເຣັດ) ແມ່ນ
ລາຊະອານາຈັກຂອງພະອົງຈະຖືກແບ່ງອອກໃຫ້ຄົນເມເດຍ ແລະຄົນເປີເຊຍ.”

29ແລ້ວກະສັດເບນຊັດຊາເຣຊົງສັ່ງໃຫ້ພວກເຂົາຫົ່ມເສື້ອສີມ່ວງໃຫ້ດານີເອນທັນທີ ແລະໃຫ້
ໃສ່ສາຍຄໍຄຳກຽດຕິຍົດ ພ້ອມກັບຊົງແຕ່ງຕັ້ງໃຫ້ເປັນອຸປະລາດໃນລາຊະອານາຈັກ. 30ໃນຄືນ
ນັ້ນເອງ ເບນຊັດຊາເຣກະສັດແຫ່ງບາບີໂລນກໍຖືກປະຫານຊີວິດ. 31ກະສັດດາຣິອຸດຄົນເມ-
ເດຍ ຈຶ່ງຍຶດອຳນາດ ແລະໄດ້ປົກຄອງລາຊະອານາຈັກ (ເວລານັ້ນ ກະສັດດາຣິອຸດຊົງມີພະ
ຊົນໄດ້ 62 ພັນສາ).

# ບົດທີ 6

## ດານີເອນໃນຖ້ຳສິງ

1ກະສັດດາຣິອຸດ ໄດ້ຊົງແຕ່ງຕັ້ງເຈົ້າແຂວງຮ້ອຍຊາວຄົນ ໃຫ້ປົກຄອງທົ່ວລາຊະອານາຈັກ
ຂອງພະອົງ. 2ຄັນແລ້ວ ພະອົງຊົງເລືອກດານີເອນກັບອີກສອງຄົນເປັນຜູ້ກວດກາລາຊະການ
ແຜ່ນດິນ ເພື່ອດູແລຮັກສາຜົນປະໂຫຍດຂອງພະລາຊາ. 3ໃນບໍ່ເຫິງ ດານີເອນກໍສະແດງໃຫ້
ກະສັດດາຣິອຸດເຫັນວ່າ ເພິ່ນກະທຳການໄດ້ດີກວ່າຜູ້ກວດກາລາຊະການ ແລະເຈົ້າແຂວງຄົນ
ອື່ນໆ ຍ້ອນເພິ່ນເປັນຄົນມີຄວາມສາມາດ ພະລາຊາຈຶ່ງຊົງພິຈາລະນາແຕ່ງຕັ້ງເພິ່ນໃຫ້ເປັນຜູ້
ຮັບຜິດຊອບທົ່ວລາຊະອານາຈັກ. 4ແລ້ວຜູ້ກວດກາ ແລະເຈົ້າແຂວງຄົນອື່ນໆ ໄດ້ພະຍາຍາມ
ຊອກຈັບເອົາຄວາມຜິດພາດໃນການບໍລິຫານລາຊະການແຜ່ນດິນຂອງດານີເອນ ແຕ່ພວກເຂົາ
ບໍ່ສາມາດພົບເຫັນຄວາມຜິດ ຫລືການທຸດຈະລິດໃດໆ ໄດ້ ຍ້ອນວ່າດານີເອນ ເປັນຄົນສັດຊື່
ແລະບໍ່ເຮັດສິ່ງທີ່ຜິດ ຫລືເສື່ອມເສຍໃດໆ. 5ພວກເຂົາຈຶ່ງເວົ້າຕໍ່ກັນແລະກັນວ່າ, “ເຮົາຈະຫາ
ເລື່ອງມາຟ້ອງຮ້ອງດານີເອນບໍ່ໄດ້ດອກ ນອກຈາກເລື່ອງທີ່ກ່ຽວຂ້ອງກັບສາດສະໜາຂອງລາວ
ເທົ່ານັ້ນ.”

6ດັ່ງນັ້ນ ພວກເຂົາຈຶ່ງເຂົ້າໄປເຝົ້າກະສັດດາຣິອຸດແລ້ວກາບທູນວ່າ, “ຂ້າແດ່ພະລາຊາ ຂໍຊົງ
ພະຈະເລີນເທີ້ນ 7ພວກຂ້ານ້ອຍທັງໝົດ ຜູ້ບໍລິຫານລາຊະການແຜ່ນດິນຂອງພະອົງ ຄືຜູ້ກວດ-
ກາລາຊະການແຜ່ນດິນ ເຈົ້າແຂວງ ຮອງເຈົ້າແຂວງ ແລະທີ່ປຶກສາໄດ້ຕົກລົງເຫັນດີກັນວ່າ ພະ
ລາຊາສົມຄວນຈະອອກຄຳສັ່ງໃຫ້ທຸກຄົນເຮັດຕາມຢ່າງເຂັ້ມງວດ ຄືໃຫ້ອອກຄຳສັ່ງວ່າ ໃນສາມ
ສິບວັນນີ້ ບໍ່ໃຫ້ຜູ້ໃດທູນຂໍສິ່ງໜຶ່ງສິ່ງໃດຈາກພະ ຫລືຄົນໃດໆ ເວັ້ນໄວ້ແຕ່ທູນຂໍຈາກພະອົງ ຜູ້
ໃດຝ່າຝືນຄຳສັ່ງນີ້ຈະຕ້ອງຖືກໂຍນເຂົ້າໄປໃນຖ້ຳສິງ. 8ດັ່ງນັ້ນ ຂໍພະອົງຊົງອອກຄຳສັ່ງນີ້ ແລະ
ລົງພະນາມໄວ້ ເພື່ອຈະໄດ້ນຳອອກໃຊ້ບັງຄັບເປັນກົດໝາຍເມເດຍ ແລະເປີເຊຍ ອັນເປັນກົດ-
ໝາຍທີ່ປ່ຽນແປງບໍ່ໄດ້.” 9ດ້ວຍເຫດນີ້ ກະສັດດາຣິອຸດ ຈຶ່ງຊົງລົງພະນາມໃນໜັງສືຄຳສັ່ງ.

10ເມື່ອດານີເອນຮູ້ວ່າ ກະສັດຊົງລົງພະນາມໃນໜັງສືຄຳສັ່ງນັ້ນແລ້ວ ເພິ່ນກໍໄປຍັງເຮືອນ
ຂອງຕົນ ໃນເຮືອນນັ້ນມີປ່ອງຢ້ຽມຊັ້ນເທິງສາມປ່ອງຢູ່ຊື່ນະຄອນເຢຣູຊາເລັມ ຢູ່ທີ່ນັ້ນ ເພິ່ນໄດ້

ຊຸເຂົ່າລົງຕໍ່ໜ້າປ່ອງຢ້ຽມທີ່ໄຂໄວ້ ແລ້ວອ້ອນວອນຕໍ່ ພຣະເຈົ້າ ມື້ລະສາມເທື່ອ ເໝືອນທີ່ເຄີຍປະ-
ຕິບັດມາ. 11ແລ້ວຄົນເຫລົ່ານີ້ກໍໄດ້ສັງເກດເຫັນ ດານີເອນ ອ້ອນວອນຕໍ່ ພຣະເຈົ້າ ພວກເຂົາທັງ
ໝົດຈຶ່ງພາກັນໄປຟ້ອງ ດານີເອນ ຕໍ່ພະລາຊາ. 12ທູນວ່າ, "ຂ້າແດ່ພະລາຊາ ພະອົງໄດ້ຊົງລົງພະ
ນາມໃນຄຳສັ່ງທີ່ວ່າ ໃນສາມສິບມື້ຕໍ່ໄປນີ້ ຖ້າບຸກຄົນຜູ້ໃດທູນຂໍສິ່ງໜຶ່ງສິ່ງໃດຈາກພະ ຫລືຄົນ
ໃດໆ ຈະຕ້ອງຖືກໂຍນເຂົ້າໄປໃນຖໍ້າສິງ ເວັ້ນໄວ້ແຕ່ທູນຂໍຈາກພະອົງ."

ພະລາຊາຊົງກ່າວຕອບວ່າ, "ແມ່ນແລ້ວ ເປັນຄຳສັ່ງທີ່ເດັດດ່ຽວຕາມກົດໝາຍຂອງ ເມເດຍ
ແລະ ເປີເຊຍ ຈະແກ້ໄຂປ່ຽນແປງບໍ່ໄດ້."

13ແລ້ວພວກເຂົາໄດ້ກາບທູນອົງພະລາຊາວ່າ, "ດານີເອນ ຜູ້ເປັນຊະເລີຍຄົນໜຶ່ງທີ່ຖືກກວາດ
ຕ້ອນມາຈາກຢູດາ ລາວບໍ່ໄດ້ເຄົາລົບພະລາຊາ ຫລືເຊື່ອຟັງຄຳສັ່ງທີ່ພະອົງຊົງປະກາດອອກໄປ
ລາວໄດ້ອ້ອນວອນຕໍ່ ພຣະເຈົ້າ ຂອງລາວມື້ລະສາມເທື່ອເປັນປະຈຳ." 14ເມື່ອພະລາຊາຊົງຊາບ
ດັ່ງນັ້ນ ພະອົງກໍຊົງເປັນທຸກໃນພະໄທ ຈຶ່ງຊົງຄິດຫາຊ່ອງທາງຊ່ອຍເຫລືອ ດານີເອນ ພະອົງຊົງ
ພະຍາຍາມຢູ່ຈົນຄໍ່າ.

15ແລ້ວຄົນເຫລົ່ານັ້ນກໍພາກັນກັບມາເຝົ້າພະລາຊາ ແລະທູນວ່າ, "ພະລາຊາຊົງຊາບແລ້ວວ່າ
ຕາມກົດໝາຍຂອງ ເມເດຍ ແລະ ເປີເຊຍ ນັ້ນ ບໍ່ມີຄຳສັ່ງໃດທີ່ພະລາຊາຊົງປະກາດອອກໄປ
ແລ້ວ ຈະປ່ຽນແປງໄດ້."

16ຕໍ່ມາ ພະລາຊາຊົງອອກຄຳສັ່ງໃຫ້ເອົາ ດານີເອນ ໂຍນເຂົ້າໄປໃນຖໍ້າສິງ ພະອົງຊົງກ່າວຕໍ່
ດານີເອນ ວ່າ, "ຂໍ ພຣະເຈົ້າ ຂອງທ່ານ ຜູ້ທີ່ທ່ານໄດ້ຮັບໃຊ້ດ້ວຍຄວາມຈິງຮັກພັກດີນັ້ນ ຈົ່ງຊ່ອຍ
ເຫລືອທ່ານສາ." 17ແລ້ວພວກເຂົາໄດ້ນຳກ້ອນຫີນມາອັດປາກຖໍ້າໄວ້ ພະລາຊາໄດ້ຊົງປະທັບຕາ
ຂອງພະອົງ ແລະຕາຂອງເຈົ້ານາຍຊັ້ນສູງໃສ່ໃນກ້ອນຫີນ ເພື່ອບໍ່ໃຫ້ໃຜຊ່ອຍເຫລືອ ດານີເອນ
ໄດ້. 18ແລ້ວພະອົງໄດ້ຊົງສະເດັດກັບຄືນພະລາຊະວັງ ໃນຄືນນັ້ນ ພະອົງບໍ່ໄດ້ສະເຫວີຍອາຫານ
ບໍ່ຍອມໃຫ້ມີການມ່ວນຊື່ນ ແລະບັນທົມບໍ່ຫລັບ.

19ພະລາຊາຊົງຕື່ນຈາກບັນທົມແຕ່ເດິກ ແລະຟ້າວສະເດັດໄປຍັງຖໍ້າສິງ. 20ເມື່ອພະອົງຊົງ
ສະເດັດເຂົ້າມາໃກ້ຖໍ້າ ກໍຊົງຮ້ອງສຽງດັງດ້ວຍຄວາມກະວົນກະວາຍວ່າ, "ດານີເອນ ຜູ້ຮັບໃຊ້
ຂອງ ພຣະເຈົ້າ ອົງຊົງພຣະຊົນຢູ່ເອີຍ ພຣະເຈົ້າ ອົງທີ່ທ່ານຮັບໃຊ້ດ້ວຍຄວາມຈົງຮັກພັກດີ ໄດ້
ຊ່ອຍທ່ານໃຫ້ພົ້ນຈາກສິງບໍ?"

21-22ດານີເອນ ໄດ້ທູນຕອບວ່າ, "ຂໍຈົ່ງຊົງພະຈະເລີນເທີ້ນ ພຣະເຈົ້າ ຊົງໃຊ້ເທວະດາຂອງ
ພຣະອົງມາອັດປາກສິງໄວ້ ເພື່ອບໍ່ໃຫ້ມັນທຳຮ້າຍຂ້ານ້ອຍ ຂ້າແດ່ພະລາຊາ ພຣະເຈົ້າ ຊົງເຮັດ
ດັ່ງນີ້ຍ້ອນພຣະອົງຊົງຊາບວ່າ ຂ້ານ້ອຍບໍ່ມີຄວາມຜິດຫຍັງເລີຍ ແລະຍ້ອນຂ້ານ້ອຍບໍ່ໄດ້ເຮັດຜິດ
ຫຍັງຕໍ່ພະລາຊາ."

23ພະລາຊາໄດ້ຊົງຊົມຊື່ນຍິນດີທີ່ສຸດ ແລະມີຄຳສັ່ງໃຫ້ນຳເອົາ ດານີເອນ ຂຶ້ນມາຈາກຖໍ້າ ດັ່ງ-
ນັ້ນ ພວກເຂົາຈຶ່ງຊ່ອຍກັນເອົາ ດານີເອນ ຂຶ້ນມາ ແລະບໍ່ປະກົດວ່າເພິ່ນໄດ້ຖືກທຳຮ້າຍເລີຍ
ຍ້ອນວ່າເພິ່ນໄດ້ໄວ້ວາງໃນໃນ ພຣະເຈົ້າ. 24ແລ້ວພະລາຊາຊົງອອກຄຳສັ່ງໃຫ້ໂຍນຄົນທັງປວງທີ່
ຟ້ອງ ດານີເອນ ລົງໄປໃນຖໍ້າສິງ ພ້ອມດ້ວຍລູກເມຍທັງຫລາຍ ກ່ອນທີ່ພວກເຂົາຈະຕົກລົງເຖິງ

ພື້ນຖ້ຳ ສິງກໍໂດດສວບກິນຈົນໝົດສິ້ນ.
25ຕໍ່ມາ ກະສັດດາຣິອຸດຊົງມີພະລາຊະສານໄປເຖິງປະຊາຊົນທຸກປະເທດ ທຸກເຊື້ອຊາດ
ແລະພາສາໃນໂລກວ່າ: “ຂໍຄວາມສຸກຄວາມຈະເລີນຈົ່ງມີແກ່ທ່ານທັງຫລາຍ.
26ເຮົາຂໍສັ່ງວ່າ ໃຫ້ທຸກຄົນທົ່ວລາຊະອານາຈັກຂອງເຮົາ ຈົ່ງຢຳເກງ ແລະເຄົາລົບນັບຖືພຣະ-
ເຈົ້າຂອງດານີເອນ.

ພຣະອົງເປັນພຣະເຈົ້າຜູ້ຊົງພຣະຊົນຢູ່
ແລະຈະປົກຄອງຕະຫລອດໄປ
ລາຊະອານາຈັກຂອງພຣະອົງຈະບໍ່ຖືກທຳລາຍ
ແລະພຣະລາຊະອຳນາດຂອງພຣະອົງຈະບໍ່ໝົດສິ້ນຈັກເທື່ອ.
27 ພຣະອົງຊົງຊ່ອຍຊີວິດໃຫ້ພົ້ນໄພ
ຊົງສະແດງໝາຍສຳຄັນ ແລະການອັດສະຈັນ
ໃນສະຫວັນຊັ້ນຟ້າ ແລະໃນແຜ່ນດິນ
ພຣະອົງຊົງຊ່ອຍດານີເອນໃຫ້ພົ້ນຈາກແຂ້ວສິງ.”

28ຕໍ່ມາ ດານີເອນກໍຈະເລີນຮຸ່ງເຮືອງຢູ່ໃນລາຊະການຂອງກະສັດດາຣິອຸດ ແລະໃນລາຊະ-
ການຂອງກະສັດໄຊຣັດຄົນເປີເຊຍ.

# ບົດທີ 7
## ນິມິດເລື່ອງສັດສີ່ຊະນິດ

1-2ໃນປີທຳອິດແຫ່ງລາຊະການເບນຊັດຊາເຣ ກະສັດແຫ່ງບາບີໂລນ ຂ້າພະເຈົ້າດານີເອນ
ໄດ້ຝັນເຫັນນິມິດໃນເວລາກາງຄືນ ແລ້ວໄດ້ບັນທຶກຄວາມຝັນ ແລະສິ່ງທີ່ເຫັນໃນຄືນນັ້ນໄວ້ດັ່ງ-
ນີ້: ຄື ມີລົມພັດມາຈາກທິດທັງສີ່ ມາຕີໜ້ານ້ຳມະຫາສະໝຸດໃຫ້ເປັນຟອງ. 3ແລ້ວມີສັດໃຫຍ່ສີ່
ໂຕຂຶ້ນມາຈາກມະຫາສະໝຸດ ສັດແຕ່ລະໂຕມີຮູບຮ່າງແຕກຕ່າງກັນ.
4ໂຕທຳອິດເບິ່ງຄ້າຍຄືສິງ ແລະມີປີກເໝືອນນົກອິນທີ ໃນຂະນະທີ່ຂ້າພະເຈົ້າເຝົ້າເບິ່ງຢູ່ນັ້ນ
ປີກຂອງມັນໄດ້ຖືກດຶງອອກ ສັດໂຕນັ້ນໄດ້ຖືກຍົກຂຶ້ນ ແລະໄດ້ຢືນຢູ່ເໝືອນຄົນ ແລ້ວຈິດໃຈມະ-
ນຸດໄດ້ຖືກມອບໃຫ້ມັນ.
5ຂ້າພະເຈົ້າໄດ້ເຫັນສັດໂຕທີສອງ ມັນມີຮູບຮ່າງເໝືອນໝີທີ່ກຳລັງຢືນຢູ່ດ້ວຍຂາຫລັງຂອງມັນ
ມີກະດູກຂ້າງສາມອັນຢູ່ໃນປາກຂອງມັນ ແລະມີສຽງບອກມັນວ່າ, “ຈົ່ງໄປກິນຊີ້ນໃຫ້ຫລາຍໆ.”
6ຂ້າພະເຈົ້າໄດ້ເບິ່ງຕໍ່ໄປ ແລະໄດ້ເຫັນສັດອີກໂຕໜຶ່ງເໝືອນກັບເສືອດາວ ທາງຫລັງຂອງມັນ
ມີປີກສີ່ປີກເໝືອນປີກນົກ ມີຫົວສີ່ຫົວ ແລະມີອຳນາດຫລາຍ.
7ຂະນະທີ່ຂ້າພະເຈົ້າກຳລັງເຝົ້າເບິ່ງຢູ່ນັ້ນ ກໍໄດ້ເຫັນສັດໂຕທີ່ສີ່ ສັດໂຕນີ້ໜ້າຢ້ານ ໂຫດຮ້າຍ
ແລະແຂງແຮງທີ່ສຸດ ມັນມີແຂ້ວເຫລັກຂະໜາດໃຫຍ່ ກິນ ແລະທຳລາຍທຸກໆສິ່ງ ມັນມີສິບເຂົາ
ແລະບໍ່ເໝືອນກັບສັດໂຕອື່ນໆ
8ໃນຂະນະທີ່ຊອມເບິ່ງເຂົາເຫລົ່ານັ້ນ ຂ້າພະເຈົ້າໄດ້ເຫັນເຂົານ້ອຍໆ ອັນໜຶ່ງປົ່ງອອກມາຈາກ

ເຂົາເຫລົ່ານັ້ນ ມັນໄດ້ເຮັດໃຫ້ສາມເຂົາທຳອິດຫລ່ອນອອກ ເຂົາອັນນີ້ມີຕາ ແລະປາກເໝືອນ
ມະນຸດ ປາກຂອງມັນໂອ້ອວດເລື່ອງໃຫຍ່ໂຕ.

## ດານີເອນເຫັນນິມິດກ່ຽວກັບ ພຣະເຈົ້າອົງຊົງພຣະຊົນຢູ່

[9]ຂະນະທີ່ຂ້າພະເຈົ້າກຳລັງຫລຽວເບິ່ງ ໄດ້ມີບັນລັງຫລາຍອັນຖືກນຳມາຕັ້ງໄວ້ ເທິງບັນລັງແຕ່
ລະອັນ ມີອົງຜູ້ຊົງພຣະຊົນຢູ່ເປັນນິດປະທັບຢູ່ ເຄື່ອງສະຫລອງຂອງພຣະອົງຂາວເໝືອນນວນ
ຝ້າຍ ຜົມເໝືອນຂົນແກະບໍລິສຸດ ພຣະບັນລັງຂອງພຣະອົງເປັນແປວໄຟ ກົງຈັກຂອງບັນລັງນັ້ນ
ເປັນໄຟລຸກຢູ່. [10]ແລະແປວໄຟໄດ້ພຸ່ງອອກຈາກທີ່ນັ້ນ ມີຄົນເປັນຈຳນວນລ້ານໆບົວລະບັດພຣະ-
ອົງຢູ່ທີ່ນັ້ນ ແລະມີຄົນເປັນໂກດໆ ຢືນຢູ່ຊ້ອງໜ້າພຣະພັກຂອງພຣະອົງ ພວກຜູ້ພິພາກສາກໍເລີ່ມ
ພິພາກສາ ແລະເປີດໜັງສືອອກມາອ່ານ.

[11]ຂະນະທີ່ຂ້າພະເຈົ້າກຳລັງຫລຽວເບິ່ງ ກໍໄດ້ຍິນສຽງເຂົານ້ອຍນັ້ນເວົ້າໂອ້ອວດຂຶ້ນ ແລະສັດ
ໂຕທີສີ່ໄດ້ຖືກຂ້າ ຊາກສົບຂອງມັນຖືກໂຍນໃສ່ໄຟເພື່ອທຳລາຍຖິ້ມ. [12]ສ່ວນສັດໂຕອື່ນນັ້ນໄດ້
ຖືກຖອດອຳນາດ ແຕ່ອະນຸຍາດໃຫ້ມັນມີຊີວິດຢູ່ຕໍ່ໄປໄດ້ຊົ່ວໄລຍະເວລາໜຶ່ງ.

[13]ລະຫວ່າງເກີດນິມິດນີ້ໃນຕອນກາງຄືນ ຂ້າພະເຈົ້າໄດ້ເຫັນຜູ້ໜຶ່ງມີຮູບຮ່າງເໝືອນມະນຸດ
ເພິ່ນໄດ້ເຂົ້າມາໃກ້ໆ ອ້ອມຮອບດ້ວຍເມກ ແລະໄດ້ເຂົ້າເຝົ້າພຣະຜູ້ຊົງພຣະຊົນຢູ່ເປັນນິດ. [14]ຢູ່ທີ່
ນັ້ນ ເພິ່ນໄດ້ຮັບອຳນາດ ກຽດຕິຍົດ ແລະເດຊານຸພາບ ເພື່ອປະຊາຊົນທຸກປະເທດ ທຸກເຊື້ອ
ຊາດ ແລະພາສາຈະຮັບໃຊ້ເພິ່ນ ເດຊານຸພາບຂອງເພິ່ນຈະມີຢູ່ຕະຫລອດໄປ ແລະລາຊະອາ-
ນາຈັກກໍຈະບໍ່ມີເວລາສິ້ນສຸດລົງ.

## ການແກ້ນິມິດ

[15]ນິມິດທີ່ຂ້າພະເຈົ້າເຫັນນັ້ນ ໄດ້ເຮັດໃຫ້ຂ້າພະເຈົ້າຕື່ນຕົກໃຈ ແລະເປັນທຸກຢ່າງໃຫຍ່ຫລວງ.
[16]ຂ້າພະເຈົ້າຈຶ່ງຂຶ້ນໄປຫາທ່ານຜູ້ໜຶ່ງທີ່ຢືນຢູ່ທີ່ນັ້ນ ເພື່ອຂໍຮ້ອງໃຫ້ເພິ່ນອະທິບາຍເລື່ອງທັງໝົດນີ້
ເພິ່ນຈຶ່ງບອກຄວາມໝາຍແກ່ຂ້າພະເຈົ້າວ່າ, [17]"ສັດໃຫຍ່ທັງສີ່ໂຕນັ້ນ ແມ່ນລາຊະອານາຈັກທັງສີ່
ທີ່ຈະເກີດຂຶ້ນໃນໂລກ. [18]ໄພ່ພົນຂອງພຣະເຈົ້າອົງສູງສຸດຈະໄດ້ຮັບພະລາຊະອຳນາດ ແລະຈະ
ໄດ້ຄອບຄອງລາຊະອານາຈັກນັ້ນຕະຫລອດໄປເປັນນິດ."

[19]ແລ້ວຂ້າພະເຈົ້າໄດ້ສົນໃຈຢາກຮູ້ເລື່ອງກ່ຽວກັບສັດໂຕທີສີ່ ຊຶ່ງບໍ່ເໝືອນກັບສັດໂຕອື່ນໆ
ມັນເປັນສັດໜ້າຢ້ານທີ່ສຸດ ມີແຂ້ວເຫລັກ ແລະເລັບຕີນທອງສຳລິດ. [20]ມັນກິນ ແລະທຳລາຍ
ທຸກໆສິ່ງ ຂ້າພະເຈົ້າສົນໃຈຢາກຮູ້ເລື່ອງກ່ຽວກັບເຂົາສິບເຂົາຢູ່ເທິງຫົວຂອງມັນ ຄື ມີເຂົາອັນ
ໜຶ່ງທີ່ປົ່ງຊອນອອກມາຕາມຫລັງ ໄດ້ເຮັດໃຫ້ເຂົາສາມເຂົາຫລ່ອນອອກ ເຂົານີ້ມີຕາ ແລະມີປາກ
ທີ່ໂອ້ອວດເລື່ອງໃຫຍ່ໂຕ ມັນໜ້າຢ້ານກົວກວ່າເຂົາອື່ນໆ. [21]ຂະນະທີ່ຂ້າພະເຈົ້າກຳລັງຫລຽວ
ເບິ່ງ ເຂົາອັນນັ້ນໄດ້ຮົບຊະນະໄພ່ພົນຂອງພຣະເຈົ້າ. [22]ແລ້ວອົງຜູ້ຊົງພຣະຊົນຢູ່ເປັນນິດໄດ້ມາ
ຕັດສິນເຂົ້າຂ້າງໄພ່ພົນຂອງພຣະເຈົ້າອົງສູງສຸດ ໄພ່ພົນຂອງພຣະເຈົ້າຈຶ່ງໄດ້ຮັບໄຊຊະນະ

[23]ຕໍ່ໄປນີ້ແມ່ນຄຳແກ້ຄວາມຝັນທີ່ຂ້າພະເຈົ້າໄດ້ຮັບຄື: ສັດໂຕທີສີ່ແມ່ນລາຊະອານາຈັກອັນທີສີ່
ທີ່ຈະເກີດຂຶ້ນໃນໂລກ ຈະແຕກຕ່າງຈາກລາຊະອານາຈັກອື່ນໆທັງປວງ ມັນຈະກືນກິນໂລກທັງ

ໝົດ ຈະທຳລາຍ ແລະກຳຈັດເສຍໃຫ້ໝົດ. [24]ເຂົາສິບເຂົານັ້ນແມ່ນກະສັດສິບອົງ ຊຶ່ງຈະເກີດ
ຂຶ້ນໃນລາຊະອານາຈັກນັ້ນ ແລ້ວຈະມີກະສັດອີກອົງໜຶ່ງເກີດຂຶ້ນ ກະສັດອົງນີ້ຈະແຕກຕ່າງຈາກ
ກະສັດອົງກ່ອນໆ ແລະຈະໂຄ່ນລົ້ມກະສັດສາມອົງເສຍ. [25]ເພິ່ນຈະເວົ້າຕໍ່ສູ້ພຣະເຈົ້າອົງສູງສຸດ
ຈະກົດຂີ່ໄພ່ພົນຂອງພຣະອົງ ຈະພະຍາຍາມປ່ຽນແປງພຣະບັນຍັດ ແລະພິທີ ທາງສາດສະໜາ
ຂອງພວກເຂົາ ໄພ່ພົນຂອງພຣະເຈົ້າຈະຢູ່ໃຕ້ອຳນາດຂອງເພິ່ນ ເປັນເວລາສາມສິບປີເຄິ່ງ.
[26]ແລ້ວສານກໍຈະເລີ່ມພິພາກສາ ຈະຕັດສິນຖອດຖອນພະລາຊະອຳນາດ ແລະທຳລາຍເພິ່ນຈົນ
ໝົດສິ້ນ. [27]ອຳນາດ ແລະຄວາມຍິ່ງໃຫຍ່ແຫ່ງລາຊະອານາຈັກທັງປວງໃນໂລກ ຈະຖືກມອບໃຫ້
ແກ່ໄພ່ພົນຂອງພຣະເຈົ້າອົງສູງສຸດ ລາຊະອຳນາດຂອງພວກເຂົານັ້ນຈະບໍ່ໝົດສິ້ນໄປ ຜູ້ປົກ-
ຄອງທັງປວງໃນໂລກຈະຮັບໃຊ້ ແລະເຊື່ອຟັງພວກເຂົາ.

[28]ເລື່ອງລາວໄດ້ສິ້ນສຸດລົງພຽງເທົ່ານີ້ ຂ້າພະເຈົ້າດານີເອນໄດ້ຕົກໃຈຫລາຍຈົນໜ້າຂາວຊີດ
ໄປ ແຕ່ກໍຍັງສາມາດຈື່ຈຳເລື່ອງລາວທັງໝົດນີ້ໄວ້ໄດ້.

# ບົດທີ 8

## ນິມິດເລື່ອງແກະ ແລະແບ້

[1]ໃນປີທີສາມແຫ່ງລາຊະການຂອງກະສັດເບນຊັດຊາເຣນັ້ນ ຂ້າພະເຈົ້າ ດານີເອນໄດ້ເຫັນ
ນິມິດເປັນເທື່ອທີສອງ. [2-3]ໃນນິມິດນັ້ນ ຂ້າພະເຈົ້າເຫັນວ່າ ຕົວເອງໄດ້ຢືນຢູ່ໃກ້ແມ່ນ້ຳອູລາຍທີ່
ນະຄອນຊູຊາ ນະຄອນທີ່ມີກຳແພງອ້ອມຮອບໃນແຂວງເອລາມ ຂ້າພະເຈົ້າໄດ້ເງີຍໜ້າຂຶ້ນເຫັນ
ແກະເຖິກໂຕໜຶ່ງຢືນຢູ່ແຄມແມ່ນ້ຳນັ້ນ ມັນມີເຂົາໃຫຍ່ສອງເຂົາ ເຂົາທີ່ປົ່ງອອກມາພາຍຫລັງ
ໃຫຍ່ກວ່າເຂົາທຳອິດ. [4]ຂ້າພະເຈົ້າໄດ້ຊອມເບິ່ງແກະນັ້ນຊົນແກະໂຕທີ່ຢູ່ທາງຕາເວັນຕົກ ທາງ
ເໜືອ ແລະທາງໃຕ້ ບໍ່ມີສັດໂຕໃດຕ້ານທານ ຫລືໜີລອດຈາກອຳນາດຂອງມັນໄດ້ ມັນເຮັດ
ຕາມໃຈ ແລະມັກໃຫຍ່ໃຝ່ສູງ.

[5]ຂະນະທີ່ຂ້າພະເຈົ້າພວມຄຶດສົງໄສໃນສິ່ງນີ້ຢູ່ນັ້ນ ໄດ້ມີແບ້ໂຕໜຶ່ງແລ່ນມາຈາກທາງຕາເວັນ-
ຕົກດ້ວຍຄວາມໄວເກືອບຕີນບໍ່ຕິດດິນ ມັນມີເຂົາສຳຄັນເຂົາໜຶ່ງຢູ່ລະຫວ່າງຕາສອງເບື້ອງ. [6]ເມື່ອ
ມັນມາເຖິງແກະໂຕທີ່ມີເຂົາສອງເຂົາຊຶ່ງຂ້າພະເຈົ້າໄດ້ເຫັນມັນຢືນຢູ່ແຄມແມ່ນ້ຳນັ້ນ ມັນໄດ້ແລ່ນ
ເຂົ້າຊົນແກະໂຕນັ້ນໝົດແຮງຂອງມັນ. [7]ຂ້າພະເຈົ້າໄດ້ຊອມເບິ່ງມັນຊົນແກະໂຕນີ້ຢູ່ ມັນຕໍ່ສູ້ດ້ວຍ
ຄວາມຄຽດຮ້າຍຫລາຍ ຈົນເຂົາສອງເຂົາຂອງມັນຫັກໄປ ຝ່າຍແກະບໍ່ມີແຮງຕ້ານທານມັນໄດ້
ຈຶ່ງຖືກແບ້ຊົດລົ້ມລົງດິນ ແລະຂຶ້ນຢຽບ ບໍ່ມີໃຜຊ່ອຍແກະໃຫ້ພົ້ນຈາກຄວາມຕາຍໄດ້. [8]ຝ່າຍແບ້
ມີຄວາມຍິ່ງຈອງຫອງຫລາຍ ແຕ່ໃນເວລາທີ່ມັນແຂງແຮງຫລາຍນັ້ນ ເຂົາຂອງມັນໄດ້ຫັກອອກ
ມີເຂົາທີ່ສຳຄັນໄດ້ປົ່ງອອກມາແທນອີກ.

[9]ເຂົາເຫລົ່ານີ້ໄດ້ຊີ້ໄປຕ່າງທິດທາງກັນ ມີເຂົານ້ອຍອັນໜຶ່ງປົ່ງອອກມາຈາກເຂົາອັນໜຶ່ງໃນສີ່
ເຂົານັ້ນ ມັນໄດ້ສະແດງອຳນາດຂອງມັນໄປໃນທາງທິດໃຕ້ ທິດຕາເວັນອອກ ແລະໄປຍັງແຜ່ນ-
ດິນທີ່ຊົງສັນຍາໄວ້. [10]ມັນແຂງແຮງພໍທີ່ຈະໂຈມຕີກອງທັບດວງດາວເທິງສະຫວັນຊັ້ນຟ້າ ມັນໄດ້
ໂຍນດວງດາວບາງກຸ່ມເຫລົ່ານັ້ນລົງມາຍັງດິນ ແລ້ວຢຽບຢ່ຳຖິ້ມ. [11]ມັນຂັດຂືນກອງທັບແຫ່ງຟ້າ

ສະຫວັນ ໂດຍຫ້າມປາມບໍ່ໃຫ້ໃຜນຳເຄື່ອງເຜົາບູຊາມາຖວາຍແກ່ຈອມທັບນັ້ນໄດ້ ແລະບໍ່ໃຫ້ໃຜ
ຂາບໄຫວ້ນະມັດສະການພຣະອົງຢູ່ໃນພຣະວິຫານ. 12ດັ່ງນັ້ນ ຈຶ່ງມີການເຮັດບາບແທນການເຜົາ
ບູຊາປະຈຳວັນ ແລະປະຖິ້ມຄວາມຈິງ ເຂົາອັນນີ້ໄດ້ເຮັດທຸກໆສິ່ງໃຫ້ເປັນຜົນສຳເລັດ.

13ແລ້ວຂ້າພະເຈົ້າໄດ້ຍິນເທວະດາສອງຕົນຖາມກັນວ່າ, "ຍັງອີກເຫິງປານໃດສິ່ງທີ່ເກີດຂຶ້ນໃນ
ນິມິດນີ້ຈຶ່ງຈະໝົດໄປ ຄືການເຮັດບາບອັນຊົ່ວຮ້າຍແທນການເຜົາບູຊາປະຈຳວັນ ກັບກອງທັບ
ສະຫວັນ ແລະພຣະວິຫານຖືກທຳລາຍນັ້ນ."

14ເທວະດາຕົນໜຶ່ງໄດ້ຕອບວ່າ, "ຍັງອີກເຫິງເທົ່າກັບເວລາເຜົາບູຊາທັງເຊົ້າ ແລະແລງຜ່ານ
ໄປໄດ້ 2.300 ວັນ ແລ້ວພຣະວິຫານຈະຄືນສູ່ສະພາບເດີມ."

## ເທວະດາຄັບຣີເອນອະທິບາຍເລື່ອງນິມິດ

15ຂ້າພະເຈົ້າດານີເອນ ເມື່ອໄດ້ເຫັນນິມິດນັ້ນກໍພະຍາຍາມໃຫ້ເຂົ້າໃຈ ແຕ່ທັນໃດນັ້ນ ມີເທ-
ວະດາຕົນໜຶ່ງຊຶ່ງມີຮູບຮ່າງເໝືອນມະນຸດຢືນຢູ່ຕໍ່ໜ້າຂ້າພະເຈົ້າ. 16ຂ້າພະເຈົ້າໄດ້ຍິນສຽງຄົນ
ຮ້ອງມາແຕ່ແມ່ນ້ຳອູລາຍວ່າ, "ຄັບຣີເອນເອີຍ ຈົ່ງອະທິບາຍຄວາມໝາຍສິ່ງທີ່ລາວເຫັນນັ້ນ ໃຫ້
ລາວຮູ້ແດ່."

17ຄັບຣີເອນໄດ້ມາຢືນຢູ່ຂ້າງຂ້າພະເຈົ້າ ຂ້າພະເຈົ້າຕົກໃຈຫລາຍຈົນລົ້ມລົງດິນ." ເທວະດາ
ຕົນນັ້ນໄດ້ເວົ້າກັບຂ້າພະເຈົ້າວ່າ, "ມະນຸດເອີຍ ຈົ່ງເຂົ້າໃຈຄວາມໝາຍເດີ້ ຄືນິມິດທີ່ເຈົ້າເຫັນນັ້ນ
ເປັນຈຸດຊີ້ບອກເວລາອະວະສານ." 18ຂະນະທີ່ເທວະດາກຳລັງເວົ້າຢູ່ ຂ້າພະເຈົ້າໄດ້ໝົດສະຕິ
ແລະລົ້ມສະຫລົບລົງຢູ່ບ່ອນນັ້ນ ເທວະດາໄດ້ໄຊມຂ້າພະເຈົ້າຂຶ້ນ

19ແລ້ວເວົ້າວ່າ, "ຂ້າພະເຈົ້າຈະສະແດງໃຫ້ທ່ານເຫັນຜົນແຫ່ງຄວາມຄຽດຮ້າຍຂອງຂ້າພະເຈົ້າ
ນິມິດນັ້ນກ່ຽວກັບເລື່ອງເວລາສຸດທ້າຍ. 20ແກະທີ່ມີເຂົາສອງເຂົາທີ່ທ່ານເຫັນນັ້ນ ສະແດງເຖິງ
ລາຊະອານາຈັກເມເດຍ ແລະເປີເຊຍ. 21ແບ້ແມ່ນລາຊະອານາຈັກກຣີກ ແລະເຂົາສຳຄັນຢູ່
ລະຫວ່າງຕາຂອງມັນ ແມ່ນກະສັດອົງທຳອິດ. 22ເຂົາສີ່ເຂົາທີ່ປົ່ງອອກມາແທນເຂົາທຳອິດທີ່ຫັກ
ອອກນັ້ນ ແມ່ນລາຊະອານາຈັກທັງສີ່ທີ່ຈະເກີດຂຶ້ນຈາກຊົນຊາດນັ້ນ ແຕ່ຈະບໍ່ເຂັ້ມແຂງເໝືອນ
ລາຊະອານາຈັກທຳອິດ.

23ເມື່ອລາຊະອານາຈັກເຫລົ່ານີ້ໃກ້ຈະສິ້ນສຸດລົງ ຄວາມຊົ່ວຮ້າຍຈະມີຫລາຍທີ່ສຸດໃນລາຊະ
ອານາຈັກນີ້ ແລ້ວຈະມີກະສັດຫົວດື້ ໂຫດຮ້າຍ ແລະສໍ້ໂກງອົງໜຶ່ງເກີດຂຶ້ນ. 24ກະສັດອົງນີ້ຈະ
ເຂັ້ມແຂງຂຶ້ນ ແຕ່ບໍ່ແມ່ນດ້ວຍອຳນາດຂອງພະອົງເອງ ພະອົງຈະເຮັດໃຫ້ເກີດຄວາມຈິບຫາຍ
ຢ່າງໜ້າຢ້ານກົວ ຈະເຮັດທຸກໆສິ່ງໃຫ້ສຳເລັດ ຈະທຳລາຍຜູ້ມີອຳນາດ ແລະໄພ່ພົນຂອງພຣະ-
ເຈົ້າ. 25ຍ້ອນວ່າພຣະອົງມີຄວາມສະຫລາດ ຈຶ່ງສໍ້ໂກງສຳເລັດແລະອວດອົ່ງ ປະຊາຊົນຈຳນວນ
ຫລາຍຈະຖືກທຳລາຍໂດຍບໍ່ທັນຮູ້ຕົວ ແມ່ນແຕ່ມະຫາກະສັດອົງຍິ່ງໃຫຍ່ ພະອົງກໍຈະບໍ່ຢ້ານ
ແຕ່ພາຍຫລັງ ພະອົງເອງຈະຖືກທຳລາຍດ້ວຍອຳນາດທີ່ບໍ່ໄດ້ມາຈາກມະນຸດ. 26ນິມິດແຫ່ງການ
ຖວາຍບູຊາທັງເຊົ້າ ແລະແລງ ຊຶ່ງໄດ້ອະທິບາຍຕໍ່ທ່ານນີ້ເປັນຄວາມຈິງ ທ່ານຈົ່ງຮັກສາໄວ້ເປັນ-
ຄວາມລັບ ເພາະເວລາທີ່ນິມິດນີ້ຈະເປັນຄວາມຈິງຂຶ້ນມາກໍຍັງຢູ່ເຫິງນານ."

27ຂ້າພະເຈົ້າ ດານີເອນ ໄດ້ອ່ອນແຮງ ແລະເຈັບປ່ວຍຢູ່ເປັນເວລາຫລາຍມື້ ຈຶ່ງສາມາດລຸກ

ໄປປະຕິບັດພາລະກິດທີ່ພະລາຊາຊົງມອບໝາຍໃຫ້ໄດ້ ຂ້າພະເຈົ້າຈຶ່ງງຶດງໍ້ ແລະບໍ່ເຂົ້າໃຈນິມິດ
ນັ້ນເລີຍ.

# ບົດທີ 9

## ດານີເອນອ້ອນວອນເພື່ອຊົນຊາດຂອງຕົນ

1ດາຣິອຸດ ລາຊະໂອລົດຂອງກະສັດເຊເຊັດ ຜູ້ຊຶ່ງເປັນຄົນເຊື້ອສາຍເມເດຍ ໄດ້ປົກຄອງ
ລາຊະອານາຈັກບາບີໂລນ. 2ໃນປີທຳອິດທີ່ພະອົງຊົງເປັນກະສັດນັ້ນ ຂ້າພະເຈົ້າ ດານີເອນໄດ້
ຮ່ຳຮຽນພຣະຄຳພີ ແລະຄິດເຖິງເລື່ອງເຈັດສິບປີທີ່ນະຄອນເຢຣູຊາເລັມຈະຖືກທຳລາຍ ຕາມທີ່
ພຣະຜູ້ເປັນເຈົ້າຊົງບອກ ເຢເຣມີຢາຜູ້ປະກາດພຣະທຳນັ້ນ. 3ຂ້າພະເຈົ້າໄດ້ອ້ອນວອນດ້ວຍໃຈ-
ຮ້ອນຮົນຕໍ່ພຣະຜູ້ເປັນເຈົ້າ ໄດ້ຮ້ອງຂໍຕໍ່ພຣະອົງ ໄດ້ອົດອາຫານ ໄດ້ນຸ່ງເຄື່ອງໄວ້ທຸກ ແລະນັ່ງ
ໃນຂີ້ເທົ່າໄຟ.

4ຂ້າພະເຈົ້າໄດ້ອ້ອນວອນຕໍ່ພຣະຜູ້ເປັນເຈົ້າຂອງຂ້າພະເຈົ້າ ແລະຍອມຮັບສາລະພາບສິ່ງທີ່
ຊົນຊາດຂອງຂ້າພະເຈົ້າໄດ້ເຮັດບາບວ່າ:

ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງຊົງຍິ່ງໃຫຍ່ ແລະໜ້າຢຳເກງ ຊົງເຮັດຕາມຄຳໝັ້ນສັນຍາ
ຂອງພຣະອົງ ຊົງສະແດງຄວາມຮັກໝັ້ນຄົງຕໍ່ຄົນທັງຫລາຍທີ່ຈົງຮັກພັກດີຕໍ່ພຣະອົງ ແລະທີ່ປະ-
ຕິບັດຕາມຄຳສັ່ງຂອງພຣະອົງ. 5ພວກຂ້ານ້ອຍໄດ້ເຮັດບາບ ໄດ້ເຮັດຊົ່ວ ແລະເຮັດບາບ ບໍ່ໄດ້
ເຮັດສິ່ງທີ່ພຣະອົງຊົງສັ່ງໃຫ້ເຮັດ ແລະບໍ່ໄດ້ປະຕິເສດສິ່ງທີ່ພຣະອົງຊົງບອກວ່າຖືກຕ້ອງ. 6ພວກ
ຂ້ານ້ອຍບໍ່ເຄີຍເຊື່ອຟັງພວກຜູ້ປະກາດພຣະທຳຂອງພຣະອົງ ຄືຜູ້ເວົ້າໃນພຣະນາມຂອງພຣະອົງ
ຕໍ່ພວກກະສັດ ພວກປົກຄອງ ພວກບັນພະບູລຸດຂອງພວກຂ້ານ້ອຍ ແລະຕໍ່ຊົນຊາດທັງໝົດ.

7ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງຊົງຊອບທຳສະເໝີ ພວກຂ້ານ້ອຍທັງປວງ ພ້ອມທັງປະ-
ຊາຊົນຜູ້ຢູ່ໃນແຂວງຢູດາ ໃນນະຄອນເຢຣູຊາເລັມ ແລະຊາວອິສຣາເອນທີ່ພຣະອົງຊົງເຮັດໃຫ້
ພວກເຂົາແຕກໄປຢູ່ໃນປະເທດໃກ້ ແລະໄກ ຍ້ອນພວກເຂົາບໍ່ເຊື່ອຟັງພຣະອົງນັ້ນ ໄດ້ເຮັດສິ່ງທີ່
ໜ້າອັບອາຍສະເໝີ. 8ຂ້າແດ່ພຣະຜູ້ເປັນເຈົ້າ ພວກກະສັດ ພວກຜູ້ປົກຄອງແລະບັນພະບູລຸດ
ຂອງພວກຂ້ານ້ອຍ ໄດ້ເຮັດສິ່ງທີ່ໜ້າອັບອາຍ ແລະສິ່ງທີ່ເປັນບາບຕໍ່ສູ້ພຣະອົງ. 9ພຣະອົງຊົງ
ເມດຕາ ແລະຊົງໃຫ້ອະໄພ ແຕ່ພວກຂ້ານ້ອຍໄດ້ກະບົດຕໍ່ສູ້ພຣະອົງ. 10ຂ້າແດ່ພຣະຜູ້ເປັນເຈົ້າ
ເມື່ອພຣະອົງຊົງບອກໃຫ້ພວກຂ້ານ້ອຍເຮັດຕາມພຣະບັນຍັດ ໂດຍຊົງບອກຜ່ານທາງພວກຜູ້ປະ-
ກາດພຣະທຳນັ້ນ ພວກຂ້ານ້ອຍບໍ່ໄດ້ເຊື່ອຟັງພຣະອົງ.

11ຊາວອິສຣາເອນທັງປວງໄດ້ເຮັດຜິດພຣະບັນຍັດຂອງພຣະອົງ ແລະບໍ່ຍອມຟັງສິ່ງທີ່ພຣະ-
ອົງຊົງບອກ ພວກຂ້ານ້ອຍໄດ້ເຮັດບາບຕໍ່ສູ້ພຣະອົງ ພຣະອົງໄດ້ຊົງນຳເອົາຄຳປ້ອຍດ່າທີ່ຂຽນໄວ້
ໃນບັນຍັດຂອງໂມເຊ ຜູ້ຮັບໃຊ້ຂອງພຣະອົງມາລົງໂທດພວກຂ້ານ້ອຍ. 12ຊົງເຮັດຕໍ່ພວກຂ້າ-
ນ້ອຍ ແລະພວກຜູ້ປົກຄອງຕາມທີ່ພຣະອົງຊົງກ່າວໄວ້ ຊົງລົງໂທດນະຄອນເຢຣູຊາເລັມ ແຮງ
ກວ່ານະຄອນອື່ນໆໃນໂລກ ພວກຂ້ານ້ອຍໄດ້ຮັບໂທດທຸກຢ່າງຕາມທີ່ກ່າວໄວ້ໃນບັນຍັດຂອງ
ໂມເຊ. 13ພວກຂ້ານ້ອຍໄດ້ຮັບໂທດທຸກຢ່າງຕາມທີ່ກ່າວໄວ້ໃນບັນຍັດຂອງໂມເຊ ຂ້າແດ່ພຣະ-

ຜູ້ເປັນເຈົ້າຂອງພວກຂ້ານ້ອຍ ແຕ່ຈົນດຽວນີ້ພວກຂ້ານ້ອຍກໍຍັງບໍ່ໄດ້ເຮັດໃຫ້ພຣະອົງຊົງພໍພຣະ-
ໄທ ຄືຍັງເຮັດບາບ ຫລືປະພຶດບໍ່ສັດຊື່ຢູ່. [14]ຂ້າແດ່ພຣະຜູ້ເປັນເຈົ້າຂອງພວກຂ້ານ້ອຍ ພຣະອົງ
ໄດ້ຊົງຈັດຕຽມການລົງໂທດພວກຂ້ານ້ອຍ ແລະໄດ້ຊົງເຮັດການນັ້ນແລ້ວ ເພາະວ່າທຸກໆສິ່ງທີ່
ພຣະອົງໄດ້ຊົງເຮັດລ້ວນແຕ່ຖືກຕ້ອງ ແຕ່ພວກຂ້ານ້ອຍບໍ່ໄດ້ເຊື່ອຟັງພຣະອົງ.

[15]ຂ້າແດ່ພຣະຜູ້ເປັນເຈົ້າຂອງພວກຂ້ານ້ອຍ ພຣະອົງຊົງສະແດງລິດອຳນາດ ໂດຍສາມາດ
ນຳເອົາໄພ່ພົນຂອງພຣະອົງອອກມາຈາກປະເທດເອຢິບ ພວກຂ້ານ້ອຍຍັງຈື່ຈຳລິດອຳນາດຂອງ
ພຣະອົງຢູ່ ແຕ່ປານນັ້ນ ພວກຂ້ານ້ອຍກໍຍັງເຮັດບາບ ແລະເຮັດຜິດຢູ່. [16]ພຣະອົງໄດ້ຊົງເຮັດ
ການອັນຊອບທຳມາແລ້ວ ດັ່ງນັ້ນ ຂໍຢ່າຊົງຄຽດຮ້າຍນະຄອນເຢຣູຊາເລັມອີກຕໍ່ໄປທ້ອນ
ເພາະວ່າ ມັນເປັນນະຄອນ ແລະເປັນພູສັກສິດຂອງພຣະອົງ ປະເທດເພື່ອນບ້ານທັງປວງຕ່າງກໍ
ໝິ່ນປະໝາດນະຄອນເຢຣູຊາເລັມ ແລະໄພ່ພົນຂອງພຣະອົງ ຍ້ອນພວກຂ້ານ້ອຍໄດ້ເຮັດບາບ
ແລະຍ້ອນການເຮັດຊົ່ວຂອງພວກບັນພະບູລຸດນັ້ນ.

[17]ຂ້າແດ່ພຣະຜູ້ເປັນເຈົ້າ ຕໍ່ໄປນີ້ຂໍຊົງໂຜດຮັບຟັງຄຳອ້ອນວອນຍອມສາລະພາບຜິດຂອງ
ຂ້ານ້ອຍແດ່ທ້ອນ ຂໍຊົງໂຜດໃຫ້ພຣະວິນຍານຂອງພຣະອົງທີ່ຖືກທຳລາຍນັ້ນກັບຄືນເປັນຄືເກົ່າ
ເພື່ອທຸກໆຄົນຈະໄດ້ຮູ້ວ່າ ພຣະອົງຊົງເປັນພຣະເຈົ້າ. [18]ຂ້າແດ່ພຣະເຈົ້າ ຂໍຊົງຮັບຟັງສຽງພວກ
ຂ້ານ້ອຍແດ່ຖ້ອນ ຈົ່ງດູແລ ແລະທອດພຣະເນດເບິ່ງຄວາມທຸກຍາກທີ່ພວກຂ້ານ້ອຍປະສົບຢູ່
ພ້ອມທັງຄວາມທຸກຍາກໃນນະຄອນຂອງພຣະອົງ ພວກຂ້ານ້ອຍອ້ອນວອນພຣະອົງຍ້ອນວ່າ
ພຣະອົງຊົງພຣະເມດຕາ ບໍ່ແມ່ນຍ້ອນພວກຂ້ານ້ອຍເປັນຄົນຊອບທຳ. [19]ຂ້າແດ່ພຣະຜູ້ເປັນເຈົ້າ
ຂໍຊົງຮັບຟັງພວກຂ້ານ້ອຍແດ່ ໂອ ພຣະຜູ້ເປັນເຈົ້າຂໍຊົງຍົກໂທດໃຫ້ພວກຂ້ານ້ອຍແດ່ທ້ອນ ຂໍ
ຊົງຮັບຟັງພວກຂ້ານ້ອຍ ແລ້ວຊົງຮີບກະທຳ ເພື່ອໃຫ້ທຸກໆຄົນຮູ້ຈັກວ່າພຣະອົງຊົງເປັນພຣະເຈົ້າ
ຂໍຢ່າຊົງລໍຊ້າຢູ່ ເພາະວ່ານະຄອນ ແລະປະຊາຊົນນີ້ເປັນຂອງພຣະອົງ.”

## ຄັບຣີເອນອະທິບາຍຄຳເວົ້າຂອງຜູ້ປະກາດພຣະທຳ

[20]ຂ້າພະເຈົ້າໄດ້ອ້ອນວອນ ແລະສາລະພາບບາບຂອງຂ້າພະເຈົ້າ ພ້ອມທັງບາບຂອງອິສຣາ-
ເອນ ຊົນຊາດຂອງຂ້າພະອົງຕໍ່ໄປ ແລະໄດ້ຮ້ອງຂໍໃຫ້ພຣະຜູ້ເປັນເຈົ້າຂອງຂ້າພະເຈົ້າ ຊົງເຮັດ
ໃຫ້ພຣະວິຫານອັນສັກສິດຂອງພຣະອົງກັບຄືນເປັນຄືເກົ່າ. [21]ເມື່ອຂ້າພະເຈົ້າກຳລັງອ້ອນວອນຢູ່
ມີເທວະດາຕົນໜຶ່ງຊື່ຄັບຣີເອນ ຄື ຕົນທີ່ຂ້າພະເຈົ້າໄດ້ເຫັນນິມິດ ເທື່ອທຳອິດນັ້ນ ໄດ້ເຫາະລົງ
ມາຍັງບ່ອນຂ້າພະເຈົ້າຢູ່ໃນເວລາຖວາຍເຄື່ອງບູຊາຕອນຄ່ຳ. [22]ເພິ່ນໄດ້ອະທິບາຍວ່າ, “ດານີ-
ເອນເອີຍ ເຮົາໄດ້ມາທີ່ນີ້ເພື່ອຊ່ອຍໃຫ້ເຈົ້າເຂົ້າໃຈຄຳເວົ້າຂອງຜູ້ປະກາດພຣະທຳ. [23]ຄື ເມື່ອເຈົ້າ
ເລີ່ມຕົ້ນຮ້ອງຂໍຕໍ່ພຣະເຈົ້າ ພຣະອົງກໍຊົງຕອບເຈົ້າ ເຮົາຈຶ່ງມາອະທິບາຍຄຳຕອບນັ້ນໃຫ້ເຈົ້າຮູ້
ເພາະວ່າພຣະເຈົ້າຊົງຮັກເຈົ້າ ບັດນີ້ ເຮົາຈະອະທິບາຍນິມິດນັ້ນ ຈົ່ງຕັ້ງໃຈຟັງໃຫ້ດີ.

[24]ເຈັດສິບວັນນັ້ນ ແມ່ນຊ່ວງໄລຍະເວລາທີ່ພຣະເຈົ້າຊົງກຳນົດໃຫ້ຊົນຊາດ ແລະນະຄອນອັນ
ສັກສິດຂອງເຈົ້າ ສິ້ນສຸດການເຮັດຜິດ ແລະການເຮັດບາບ ຕໍ່ໄປ ການເຮັດບາບຈະໄດ້ຮັບການ
ໃຫ້ອະໄພ ແລະມີຄວາມຍຸດຕິທຳຕະຫລອດໄປເປັນນິດ ເພື່ອວ່ານິມິດ ແລະຄຳເວົ້າຂອງຜູ້ປະ-
ກາດພຣະທຳຈະໄດ້ສຳເລັດເປັນຈິງ ແລະເພື່ອພຣະວິຫານອັນສັກສິດຈະໄດ້ເປັນທີ່ຖວາຍແດ່

ພຣະເຈົ້າ. 25ຈົ່ງສັງເກດ ແລະເຂົ້າໃຈດັ່ງນີ້ ນັບຕັ້ງແຕ່ອອກຄຳສັ່ງໃຫ້ສ້າງນະຄອນເຢຣູຊາເລັມ
ຂຶ້ນໃໝ່ ໄປຈົນເຖິງພວກຜູ້ນຳທີ່ພຣະເຈົ້າຊົງເລືອກໄດ້ມາຄອບຄອງ ຈະເປັນເຈັດອາທິດ ແລະ
ເປັນເວລາຫົກສິບສອງອາທິດ ພວກເຂົາຈະສ້າງນະຄອນເຢຣູຊາເລັມຂຶ້ນໃໝ່ ຈະມີຖະໜົນ
ຫລາຍສາຍ ແລະປ້ອມປ້ອງກັນເມືອງຢ່າງເຂັ້ມແຂງ ແລ້ວເມືອງນີ້ຈະໝັ້ນຄົງຢູ່ເປັນເວລາດົນ
ນານ ແຕ່ມັນຈະເປັນສະໄໝທີ່ມີຄວາມຫຍຸ້ງຍາກ ໃນຄາວສິ້ນສຸດສະໄໝນັ້ນ. 26ທ່ານຜູ້ໜຶ່ງທີ່
ພຣະເຈົ້າຊົງເລືອກໄວ້ຈະຖືກຂ້າຢ່າງບໍ່ຍຸດຕິທຳ ນະຄອນ ແລະພຣະວິຫານກໍຈະຖືກກອງທັບ
ຂອງຜູ້ນຳທີ່ຍິ່ງໃຫຍ່ຄົນໜຶ່ງບຸກລຸກທຳລາຍ ຄາວສິ້ນສຸດນີ້ຈະມາທຳລາຍເໝືອນນໍ້າຖ້ວມ ຕອນ
ສຸດທ້າຍຈະມີສົງຄາມ ແລະການທຳລາຍທີ່ພຣະເຈົ້າຊົງສັ່ງໃຫ້ເກີດຂຶ້ນ. 27ຜູ້ນຳຄົນນັ້ນຈະມີ
ສຳພັນທະໄມຕີຢ່າງໜຽວແໜ້ນກັບຄົນຈຳນວນຫລາຍເປັນເວລາອາທິດໜຶ່ງ ເທິງທີ່ສູງສຸດຂອງ
ພຣະວິຫານນັ້ນ ຈະມີຂອງແປກປະຫລາດອັນໜ້າຢ້ານຕັ້ງຢູ່ ຈະມີຢູ່ທີ່ນັ້ນຈົນຮອດເວລາທີ່ພຣະ-
ເຈົ້າຊົງເຮັດໃຫ້ຜູ້ຕັ້ງມັນໄວ້ໄດ້ພົບກັບຈຸດຈົບ.”

# ບົດທີ 10

## ດານີເອນເຫັນນິມິດໃກ້ແມ່ນໍ້າຕີກຣິດ

1ໃນປີທີສາມແຫ່ງລາຊະການໄຊຣັດກະສັດເປີເຊຍນັ້ນ ໄດ້ມີການເປີດເຜີຍຖ້ອຍຄຳໃຫ້ດານີ-
ເອນຮູ້ທາງນິມິດ (ດານີເອນມີຊື່ເອີ້ນອີກວ່າ ເບນເຕຊັດຊາເຣ) ຖ້ອຍຄຳນັ້ນເປັນຄວາມຈິງ ແຕ່
ເຂົ້າໃຈຍາກທີ່ສຸດ.

2-3ໃນເວລານັ້ນຂ້າພະເຈົ້າ ດານີເອນໄດ້ເປັນທຸກຢູ່ສາມອາທິດ ບໍ່ໄດ້ກິນຂອງແຊບ ຫລືຊີ້ນ
ໃດໆ ບໍ່ໄດ້ດື່ມເຫລົ້າອະງຸ່ນ ບໍ່ໄດ້ຫວີຜົມຈົນຕະຫລອດສາມອາທິດ. 4ໃນວັນທີຊາວສີ່ຂອງ
ເດືອນທຳອິດ ຂ້າພະເຈົ້າໄດ້ຢືນຢູ່ແຄມຕາຝັ່ງແມ່ນໍ້າໃຫຍ່ຕີກຣິດ. 5ແລະໄດ້ເງີຍໜ້າຂຶ້ນ ເຫັນ
ຊາຍຜູ້ໜຶ່ງນຸ່ງຫົ່ມເຄື່ອງທີ່ສະຫງ່າງາມ ແລະຂັດສາຍແອວຄຳ. 6ຕົນຕົວຂອງເພິ່ນສ່ອງແສງເປັນ
ປະກາຍເໝືອນເພັດ ໜ້າມີແສງເຫລື້ອມເໝືອນຟ້າແມບເຫລື້ອມຕາ ມີແສງເໝືອນໄຟ ແຂນຂາ
ເຫລື້ອມເປັນເງົາເໝືອນທອງສຳລິດທີ່ຂັດສີແລ້ວ ແລະສຽງຮ້ອງຂອງເພິ່ນດັງເໝືອນສຽງຮ້ອງ
ຂອງຝູງຊົນຈຳນວນຫລາຍ.

7ຂ້າພະເຈົ້າຜູ້ດຽວເທົ່ານັ້ນທີ່ໄດ້ເຫັນນິມິດນີ້ ຄົນທັງຫລາຍທີ່ຢູ່ກັບຂ້າພະເຈົ້າບໍ່ໄດ້ເຫັນຫຍັງ
ແຕ່ພວກເຂົາກໍຢ້ານ ແລະແລ່ນໄປລີ້ຢູ່. 8ຂ້າພະເຈົ້າຜູ້ດຽວໄດ້ຢູ່ເບິ່ງນິມິດອັນແປກປະຫລາດນີ້
ຂ້າພະເຈົ້າບໍ່ມີເຫື່ອແຮງເຫລືອຢູ່ເລີຍ ສີໜ້າກໍປ່ຽນແປງໄປ. 9ເມື່ອໄດ້ຍິນເພິ່ນເວົ້າແລ້ວ ຂ້າພະ-
ເຈົ້າກໍລົ້ມລົງດິນ ໝົດຄວາມຮູ້ສຶກ ແລະໝູບໜ້າຢູ່ທີ່ນັ້ນ.

10ແລ້ວມີມືອັນໜຶ່ງມາໂຊມໃຫ້ລຸກຂຶ້ນ ໃຫ້ຫົວເຂົ່າແລະມືຄໍ້າດິນໄວ້ ແຕ່ຂ້າພະເຈົ້າກໍຍັງຕົວສັ່ນ
ຢູ່. 11ຄົນນັ້ນໄດ້ເວົ້າກັບຂ້າພະເຈົ້າວ່າ, “ດານີເອນເອີຍ ພຣະເຈົ້າຊົງຮັກເຈົ້າ ຈົ່ງຢືນຂຶ້ນ ແລະ
ຕັ້ງໃຈຟັງສິ່ງທີ່ເຮົາຈະເວົ້າ ພຣະເຈົ້າຊົງໃຊ້ໃຫ້ເຮົາມາຫາເຈົ້າ” ເມື່ອເພິ່ນເວົ້າດັ່ງນີ້ແລ້ວ ຂ້າພະ-
ເຈົ້າກໍຢືນຕົວສັ່ນຢູ່.

12ຕໍ່ມາເພິ່ນໄດ້ເວົ້າວ່າ, “ດານີເອນເອີຍ ຢ່າຢ້ານເດີ້ ມື້ທຳອິດທີ່ເຈົ້າຕັດສິນໃຈຖ່ອມຕົວລົງ

ອ້ອນວອນ ເພື່ອໃຫ້ເຂົ້າໃຈນັ້ນ ພຣະເຈົ້າໄດ້ຊົງຮັບຟັງຄຳອ້ອນວອນຂອງເຈົ້າແລ້ວ ເຮົາໄດ້ມາ
ຍ້ອນຄຳອ້ອນວອນຂອງເຈົ້ານັ້ນ. [13]ເທວະດາຕົນປົກປັກຮັກສາລາຊະອານາຈັກເປີເຊຍໄດ້ຂັດ-
ຂວາງເຮົາເປັນເວລາຊາວເອັດມື້ ແລ້ວມີກາເອນ ເທວະດາຊັ້ນຫົວໜ້າຕົນໜຶ່ງໄດ້ມາຊ່ອຍເຮົາ
ເພາະເຮົາຜູ້ດຽວທີ່ຍັງເຫລືອຢູ່ໃນລາຊະອານາຈັກເປີເຊຍ. [14]ເຮົາໄດ້ມາເຮັດໃຫ້ເຈົ້າເຂົ້າໃຈໃນ
ສິ່ງທີ່ຈະເກີດຂຶ້ນກັບປະຊາຊົນຂອງເຈົ້າໃນອະນາຄົດ ອັນນີ້ແມ່ນນິມິດໃຫຍ່ກ່ຽວກັບອະນາຄົດ.”
[15]ເມື່ອເພິ່ນກ່າວດັ່ງນີ້ແລ້ວ ຂ້າພະເຈົ້າກໍກົ້ມໜ້າບໍ່ກ້າເວົ້າຈາຫຍັງ. [16]ແລ້ວເທວະດາຕົນໜຶ່ງ
ຊຶ່ງມີຮູບຮ່າງເໝືອນມະນຸດ ເດ່ມືອອກມາບາຍຮິມສົບຂອງຂ້າພະເຈົ້າ ຂ້າພະເຈົ້າຈຶ່ງເວົ້າຕໍ່ເພິ່ນ
ຊຶ່ງຢືນຢູ່ຕໍ່ໜ້າວ່າ, “ນາຍເອີຍ ນິມິດນີ້ເຮັດໃຫ້ຂ້ານ້ອຍໝົດແຮງຫລາຍ ຈົນຕົນຕົວຂ້ານ້ອຍສັ່ນ.
[17]ຂ້ານ້ອຍເປັນເໝືອນຂ້າທາດທີ່ຢືນຢູ່ຕໍ່ໜ້ານາຍ ຈະເວົ້າກັບທ່ານໄດ້ຢ່າງໃດ ເພາະວ່າບໍ່ມີແຮງ
ຫລືລົມຫາຍໃຈເຫລືອຢູ່ໃນຕົວເລີຍ.”
[18]ແລ້ວເພິ່ນໄດ້ຈັບບາຍຂ້າພະເຈົ້າອີກເທື່ອໜຶ່ງ ຂ້າພະເຈົ້າຈຶ່ງຮູ້ສຶກມີແຮງຂຶ້ນ. [19]ເພິ່ນໄດ້ເວົ້າ
ວ່າ, “ພຣະເຈົ້າຊົງຮັກແພງເຈົ້າ ດັ່ງນັ້ນ ຢ່າອຸກໃຈ ຫລືຢ້ານເດີ້ ຈົ່ງກ້າຫານສາ.”
ເມື່ອເພິ່ນກ່າວດັ່ງນີ້ແລ້ວ ຂ້າພະເຈົ້າກໍຮູ້ສຶກມີແຮງ ແລະເວົ້າວ່າ ນາຍເອີຍ ຈົ່ງບອກຂ້ານ້ອຍ
ແດ່ສິ່ງທີ່ນາຍຈະຕ້ອງເວົ້ານັ້ນ ທ່ານໄດ້ເຮັດໃຫ້ຂ້ານ້ອຍມີແຮງຂຶ້ນ.”
[20-21]ແລ້ວເພິ່ນເວົ້າວ່າ, “ເຈົ້າຮູ້ບໍວ່າ ເປັນຫຍັງເຮົາຈຶ່ງມາຫາເຈົ້າ? ເຮົາມາມື້ນີ້ເພື່ອເປີດເຜີຍ
ສິ່ງທີ່ຂຽນໄວ້ໃນໜັງສືສັດຈະທຳໃຫ້ເຈົ້າຮູ້ ບັດນີ້ ເຮົາຈະຕ້ອງຄືນໄປຕໍ່ສູ້ກັບກະສັດແຫ່ງປະເທດ
ເປີເຊຍ ຫລັງຈາກນັ້ນ ກໍແມ່ນກະສັດປະເທດກຣີກຈະມາປະກົດ ບໍ່ມີໃຜຊ່ອຍເຫລືອເຮົາ
ນອກຈາກມີກາເອນ ເທວະດາຕົນທີ່ປົກປັກຮັກສາປະເທດອິສຣາເອນ.

# ບົດທີ 11

[1]ເພິ່ນເຮັດໜ້າທີ່ເປັນຜູ້ຊ່ອຍເຫລືອ ແລະປົກປັກຮັກສາເຮົາ.

## ລາຊະອານາຈັກພາກໃຕ້ແລະພາກເໜືອ

[2]ສິ່ງທີ່ເຮົາຈະບອກເຈົ້າຕໍ່ໄປນີ້ເປັນຄວາມຈິງ ຄືຈະມີກະສັດອີກສາມອົງປົກຄອງປະເທດເປີ-
ເຊຍ ອົງທີສີ່ຈະເປັນອົງສຸດທ້າຍ ກະສັດອົງນີ້ຈະມີຊັບສົມບັດຫລາຍກວ່າອົງອື່ນໆທັງໝົດ ໃນ
ເວລາທີ່ພະອົງຊົງເຂັ້ມແຂງ ແລະມີຊັບສົມບັດຫລາຍ ພະອົງຈະເຮັດສົງຄາມກັບລາຊະອານາຈັກ
ກຣີກ. [3]ແລ້ວຈະມີກະສັດທີ່ກ້າຫານອົງໜຶ່ງ ຄອບຄອງທົ່ວລາຊະອານາຈັກໃຫຍ່ ແລະຈະເຮັດ
ທຸກສິ່ງຕາມພະປະສົງ. [4]ແຕ່ໃນເວລາທີ່ພະອົງຊົງມີອຳນາດຍິ່ງໃຫຍ່ນັ້ນອານາຈັກຂອງພະອົງຈະ
ແຕກແຍກ ແລະຖືກແບ່ງອອກເປັນສີ່ສ່ວນ ລາຊະວົງຂອງພະອົງຈະບໍ່ໄດ້ປົກຄອງ ຄົນອື່ນຈະ
ເຂົ້າປົກຄອງແທນ ແຕ່ພວກເຂົາຈະບໍ່ມີອຳນາດເໝືອພະອົງ.
[5]ກະສັດພາກໃຕ້ກໍເປັນຜູ້ໜຶ່ງໃນພວກນັ້ນ ຊຶ່ງມີອຳນາດ ແຕ່ຈະມີນາຍທະຫານອີກຜູ້ໜຶ່ງຂອງ
ພະອົງເຂັ້ມແຂງກວ່າ. [6]ຫລັງຈາກນັ້ນ ຫລາຍປີ ກະສັດພາກໃຕ້ຈະໃຫ້ພະລາຊະທິດາຂອງພະ
ອົງສົມລົດກັບກະສັດພາກເໜືອ ເພື່ອຈະໄດ້ເປັນພັນທະມິດກັນ ແຕ່ພັນທະມິດນີ້ຈະມີຢູ່ບໍ່ເຖິງ
ເພາະວ່າພະນາງກັບພວກຄົນໃຊ້ທີ່ໄປກັບພະນາງພ້ອມທັງພະໂອລົດ ແລະພະລາຊະສາມີຂອງ

ພະນາງຈະຖືກຂ້າທັງໝົດ. [7]ໃນບໍ່ດົນ ເຊື້ອພະວົງອົງໜຶ່ງຂອງພະນາງກໍຈະໂຈມຕີກອງທັບຂອງ
ກະສັດພາກເໜືອ ເພິ່ນຈະເຂົ້າໄປໂຈມຕີປ້ອມ ແລະຊະນະພວກເຂົາ. [8]ແລ້ວຈະຂົນເອົາຮູບເຄົາ-
ລົບຂອງພວກເຂົາ ພ້ອມດ້ວຍສິ່ງຂອງອັນມີຄ່າທີ່ເຮັດດ້ວຍເງິນຄຳທັງໝົດໄປຍັງປະເທດເອຢິບ
ຫລັງຈາກນັ້ນ ຈະມີຄວາມສະຫງົບສຸກຢູ່ຫລາຍປີ. [9]ແລ້ວກະສັດພາກເໜືອຈະຍົກທັບເຂົ້າໂຈມຕີ
ພາກໃຕ້ ແຕ່ຈະຖືກກອງທັບແຫ່ງພາກໃຕ້ຕີໂຕ້ພ່າຍໄປ.

[10]ພະລາຊະໂອລົດທັງຫລາຍຂອງກະສັດພາກເໜືອຈະຕຽມຮົບ ແລະຮວບຮວມກຳລັງຮົບໄວ້
ເປັນຈຳນວນຫລາຍ ພະໂອລົດອົງໜຶ່ງຈະມີໄຊຊະນະຢ່າງງ່າຍດາຍ ເພິ່ນຈະຜ່ານເຂົ້າໂຈມຕີ
ເອົາປ້ອມຂອງພະອົງຄືນມາ. [11]ກະສັດພາກໃຕ້ຈະເຂົ້າສູ່ສົງຄາມຕໍ່ຕ້ານກະສັດພາກເໜືອດ້ວຍ
ຄວາມຄຽດແຄ້ນ ແລະຈະຈັບເອົາພົນຮົບຂອງພະອົງຈຳນວນຫລວງຫລາຍ. [12]ພຣະອົງຈະພາກ-
ພູມພະໄທໃນໄຊຊະນະ ແລະໄດ້ຂ້າທະຫານຈຳນວນຫລວງຫລາຍ ແຕ່ພະອົງຈະບໍ່ມີໄຊຊະນະ
ຕໍ່ໄປເລື້ອຍໆ. [13]ຝ່າຍກະສັດພາກເໜືອ ຈະກັບຄືນໄປຮວບຮວມພົນຮົບໃຫ້ໄດ້ຫລາຍກວ່າແຕ່
ກ່ອນ ເມື່ອໄດ້ເວລາອັນເໝາະສົມແລ້ວ ພະອົງກັບກອງທັບໃຫຍ່ທີ່ມີອາວຸດດີຈຶ່ງຈະກັບຄືນມາຕໍ່-
ສູ້.

[14]ເມື່ອນັ້ນ ຈະມີຫລາຍຄົນລຸກຂຶ້ນຕໍ່ສູ້ກະສັດພາກໃຕ້ ດານີເອນເອີຍ ຄົນທີ່ແຂງແຮງບາງ
ຄົນຈາກຊົນຊາດຂອງເຈົ້າຈະເປັນກະບົດຍ້ອນນິມິດທີ່ພວກເຂົາໄດ້ເຫັນ ແຕ່ພວກເຂົາຈະຖືກ
ປາບພ່າຍແພ້. [15]ກະສັດພາກເໜືອຈະປິດລ້ອມເມືອງທີ່ມີກຳແພງອ້ອມຮອບ ແລ້ວຍຶດເອົາເມືອງ
ນັ້ນໄດ້ ພວກທະຫານແຫ່ງພາກໃຕ້ຈະຕໍ່ສູ້ບໍ່ໄຫວ ແມ່ນແຕ່ທະຫານທີ່ເກັ່ງກ້າທີ່ສຸດກໍສູ້ບໍ່ໄດ້.
[16]ພວກຄົນຈະເຮັດທຸກຢ່າງຕາມຄວາມພໍໃຈໂດຍບໍ່ມີການຕໍ່ຕ້ານ ກະສັດພາກເໜືອຈະຢູ່ໃນ
ແຜ່ນດິນທີ່ຊົງສັນຍາໄວ້ ແລະຈະມີອຳນາດຢ່າງສົມບູນຢູ່ໃນແຜ່ນດິນນັ້ນ. [17]ກະສັດພາກເໜືອ
ຄິດຈະໃຊ້ທະຫານທັງໝົດໄປຕໍ່ສູ້ກະສັດພາກໃຕ້ ແຕ່ຊົງປ່ຽນຄວາມຄິດນັ້ນເສຍ ແລ້ວພະອົງຈະ
ເຮັດສັນຍາມອບພະລາຊະທິດາໃຫ້ສົມລົດກັບກະສັດພາກໃຕ້ ເພື່ອໃຫ້ພະນາງພະຍາຍາມທຳ-
ລາຍຝ່າຍສັດຕູ ແຕ່ພະອົງຈະເຮັດບໍ່ສຳເລັດ. [18]ຫລັງຈາກນັ້ນ ພະອົງຈະໂຈມຕີຊົນຊາດຕ່າງໆ
ຕາມແຄມທະເລ ເພື່ອຈະຍຶດເອົາໃຫ້ໄດ້ເປັນຈຳນວນຫລາຍ ແຕ່ຈະມີຜູ້ນຳຄົນຕ່າງຊາດຄົນໜຶ່ງ
ປາບພະອົງລົງ ແລະກຳຈັດຄວາມອວດອົ່ງຂອງພະອົງໃຫ້ໝົດໄປ. [19]ກະສັດພາກເໜືອຈະສະ-
ເດັດຄືນໄປຍັງປ້ອມໃນປະເທດຂອງພະອົງເອງ ແຕ່ພະອົງກໍຈະຖືກປາບໃຫ້ໝົດສິ້ນລົງ.

[20]ຕໍ່ຈາກພະອົງມາ ຈະມີກະສັດອີກອົງໜຶ່ງ ກະສັດອົງນີ້ຈະສົ່ງເຈົ້າພະນັກງານສ່ວຍສາອາ-
ກອນໄປຫາເກັບເອົາເງິນ ເພື່ອມາເພີ່ມລາຍໄດ້ໃຫ້ລາຊະອານາຈັກຂອງພະອົງ ໃນບໍ່ເທິງກະສັດ
ອົງນີ້ກໍຈະຖືກເຂົາຂ້າຖິ້ມ.

## ກະສັດໃຈໂຫດ

[21]ກະສັດພາກເໜືອອົງຕໍ່ໄປຈະເປັນຄົນໃຈຮ້າຍ ຊຶ່ງບໍ່ມີສິດຈະໄດ້ເປັນກະສັດ ແຕ່ພະອົງກໍຈະ
ໄດ້ເປັນຢ່າງບໍ່ມີໃຜຄາດຄິດ ແລະຈະຍຶດເອົາອຳນາດດ້ວຍກົນອຸບາຍ. [22]ເຫລົ່າທະຫານທີ່ຕໍ່ຕ້ານ
ພະອົງ ແລະແມ່ນແຕ່ມະຫາປະໂລຫິດຂອງພຣະເຈົ້າກໍຈະຖືກກວດລ້າງ ແລະກຳຈັດໃຫ້ໝົດ
ໄປ. [23]ພະອົງຈະລໍ້ລວງເອົາຊົນຊາດອື່ນມາເປັນພັນທະມິດ ເຖິງແມ່ນພະອົງໄດ້ປົກຄອງພຽງຊົນ

ຊາດນ້ອຍໆເທົ່ານັ້ນ ແຕ່ພະອົງກໍເຂັ້ມແຂງຂຶ້ນ. 24ຈະບຸກລຸກເຂດແຂວງທີ່ອຸດົມສົມບູນ ແລະມີ
ຄວາມສະຫງົບສຸກ ຈະເຮັດສິ່ງທີ່ລາຊະວົງບໍ່ເຄີຍເຮັດມາກ່ອນ ແລ້ວພະອົງຈະແບ່ງຊັບສິ່ງຂອງ
ທີ່ຍຶດມາໄດ້ໃນສົງຄາມໃຫ້ພັກພວກຂອງພະອົງ ແລະຈະວາງແຜນໂຈມຕີປ້ອມ ແຕ່ພະອົງຈະ
ເຮັດໄປບໍ່ໄດ້ເຫິງນານ.

25ພະອົງຈະຍົກກອງທະຫານຈຳນວນຫລາຍ ໄປໂຈມຕີກະສັດພາກໃຕ້ຢ່າງກ້າຫານ ຝ່າຍ
ກະສັດພາກໃຕ້ຈະຕຽມຕົວສູ້ກັບກອງທັບໃຫຍ່ທີ່ເຂັ້ມແຂງທີ່ສຸດ ແຕ່ພະອົງຈະເຮັດບໍ່ສຳເລັດ
ຍ້ອນວ່າຖືກຫລອກດ້ວຍກົນອຸບາຍ. 26ຄະນະຜູ້ປຶກສາຄົນສະໜິດຂອງພະອົງຈະປອງຮ້າຍພະ
ອົງ ພວກທະຫານຫລາຍຄົນຂອງພະອົງຈະຖືກຂ້າ ກອງທັບກໍຈະຖືກກຳຈັດໃຫ້ໝົດໄປ. 27ແລ້ວ
ກະສັດທັງສອງອົງນີ້ຈະສະເຫວີຍຮ່ວມໂຕະດຽວກັນ ແຕ່ພຶດຕິກຳຂອງພວກເພິ່ນຈະເປັນໄປໃນ
ທາງຊົ່ວຮ້າຍ ຈະເວົ້າຕົວະຊຶ່ງກັນແລະກັນ ສະນັ້ນ ຕ່າງຝ່າຍກໍຈະບໍ່ໄດ້ອັນໃດຕາມທີ່ຫວັງໄວ້
ເພາະວ່າ ເວລາອັນເໝາະສົມຍັງບໍ່ມາເຖິງ. 28ກະສັດພາກເໜືອຈະກັບຄືນບ້ານເມືອງພ້ອມດ້ວຍ
ສິ່ງຂອງທີ່ຍຶດໄດ້ທັງໝົດ ຈະຊົງວາງແຜນທຳລາຍສາດສະໜາແຫ່ງໄພ່ພົນຂອງ **ພຣະເຈົ້າ** ພະ
ອົງຈະເຮັດຕາມຊອບພະໄທ ແລ້ວກັບຄືນໄປບ້ານເມືອງຂອງຕົນເອງ.

29ໃນພາຍຫລັງ ພະອົງຈະບຸກຮຸກພາກໃຕ້ອີກ ແຕ່ທຸກສິ່ງຈະບໍ່ເປັນໄປເໝືອນແຕ່ກ່ອນ.
30ເພາະວ່າ ພວກກິດຕີມຈະຕາມມາທາງເຮືອເພື່ອຂັດຂວາງພະອົງ ພະອົງຈະຢ້ານກົວ ແລ້ວ
ພະອົງຈະກັບໄປດ້ວຍຄວາມຄຽດແຄ້ນ ຈະວາງແຜນທຳລາຍສາດສະໜາແຫ່ງໄພ່ພົນຂອງ
**ພຣະເຈົ້າ** ແລະຈະເຮັດຕາມຄຳແນະນຳຂອງພວກທີ່ປະຖິ້ມສາດສະໜາແລ້ວນັ້ນ. 31ໜ່ວຍທະ-
ຫານບາງໜ່ວຍຂອງພະອົງຈະເຮັດໃຫ້ພຣະວິຫານ ແລະແທ່ນຖວາຍບູຊາເສຍຄວາມສັກສິດ
ພວກເຂົາຈະບັງຄັບໃຫ້ເລີກການເຜົາບູຊາປະຈຳວັນ ແລ້ວຕັ້ງຂອງແປກປະຫລາດອັນໜ້າຢ້ານ
ໄວ້. 32ຝ່າຍກະສັດຈະໃຊ້ກົນອຸບາຍເອົາຊະນະຄົນອື່ນໆ ທີ່ປະຖິ້ມສາດສະໜາຂອງຕົນແລ້ວ
ແຕ່ພວກທີ່ບົວລະບັດ **ພຣະເຈົ້າ** ຈະເຂັ້ມແຂງ ແລະສຳເລັດຜົນ. 33ຄົນເຫລົ່ານີ້ເປັນຜູ້ທີ່ສະຫລາດ
ໃນໝູ່ປະຊາຊົນ ພວກເຂົາຈະສິດສອນວິຊາຄວາມຮູ້ໃຫ້ແກ່ຄົນອື່ນຈຳນວນຫລວງຫລາຍ ແຕ່ໃນ
ຊົ່ວເວລາໜຶ່ງ ພວກເຂົາບາງຄົນຈະຕາຍດ້ວຍດາບ ແລະໄຟ ບາງຄົນຈະຖືກປຸ້ນ ແລະຖືກຈັບ
ໄປເປັນຊະເລີຍ. 34ໃນຂະນະທີ່ກຳລັງຖືກເຂັ່ນຂ້າຢູ່ນັ້ນ ພວກເຂົາຈະໄດ້ຮັບຄວາມຊ່ອຍເຫລືອ
ແລະຈະມີຫລາຍຄົນມາຊ່ອຍເຫລືອພວກເຂົາຍ້ອນເຫັນແກ່ປະໂຫຍດສ່ວນຕົວ. 35ຄົນຜູ້ສະ-
ຫລາດບາງຄົນຈະຖືກຂ້າ ຈຸດປະສົງຂອງເລື່ອງນີ້ກໍເພື່ອຢາກໃຫ້ປະຊາຊົນມີຈິດໃຈສະອາດບໍລິ-
ສຸດ ໄປຈົນເຖິງເວລາສຸດທ້າຍທີ່ **ພຣະເຈົ້າ** ຊົງກຳໜົດໄວ້.

36ກະສັດພາກເໜືອຈະເຮັດຕາມຊອບພະໄທ ຈະໂອ້ອວດວ່າຕົນຍິ່ງໃຫຍ່ກວ່າພະໃດໆ ແລະ
ອວດວ່າຕົນສູງສຸດກວ່າ **ພຣະເຈົ້າ** ອົງສູງສຸດ ພະອົງຈະເຮັດດັ່ງນີ້ໄປຈົນເຖິງເວລາ **ພຣະເຈົ້າ** ຊົງ
ລົງໂທດພະອົງ **ພຣະເຈົ້າ** ຈະຊົງຕັດສິນພຣະໄທເຮັດສິ່ງທັງຫລາຍນີ້. 37ກະສັດຊີເຣຍຈະບໍ່ເອົາ-
ໃຈໃສ່ກັບພະທີ່ພວກບັນພະບູລຸດຂອງຕົນເຄີຍບົວລະບັດມາ ແລະພະທີ່ພວກຜູ້ຍິງນັບຖື ແທ້ຈິງ
ແລ້ວ ພະອົງບໍ່ໄດ້ເອົາໃຈໃສ່ກັບພະໃດໆເລີຍ ເພາະພະອົງຄິດວ່າຕົນຍິ່ງໃຫຍ່ກວ່າພະເຫລົ່ານັ້ນ.
38ພະອົງຈະໃຫ້ກຽດພະທີ່ຄຸ້ມຄອງປ້ອງກັນປ້ອມແທນພະເຫລົ່ານັ້ນ ຈະຖວາຍເງິນຄຳ ຖວາຍ

ເພັດ ແລະຂອງດີມີຄ່າອື່ນໆ ແກ່ພະທີ່ລາຊະວົງຂອງພະອົງບໍ່ເຄີຍຂາບໄຫວ້ມາກ່ອນ. 39ຈະໃຊ້
ຄົນທີ່ຂາບໄຫວ້ພະຕ່າງຊາດປ້ອງກັນປ້ອມຂອງພະອົງ ຈະໃຫ້ກຽດຢ່າງສູງແກ່ພວກທີ່ຍອມຮັບ
ເອົາພະອົງເປັນຜູ້ຄຸ້ມຄອງ ຈະມອບໝາຍຕຳແໜ່ງອັນສູງທາງລາຊະການໃຫ້ ແລະມອບທີ່ດິນ
ໃຫ້ເປັນສິ່ງຕອບແທນ.

40ເມື່ອເວລາກຳນົດຂອງກະສັດພາກເໜືອໃກ້ຈະໝົດລົງ ກະສັດພາກໃຕ້ຈະໂຈມຕີພະອົງ ແຕ່
ພະອົງກໍຈະຕອບໂຕ້ດ້ວຍກຳລັງທັງໝົດ ໂດຍຈະໃຊ້ລົດຮົບ ພົນມ້າ ແລະເຮືອຈຳນວນຫລາຍ
ຈະບຸກໂຈມຕີພາກໃຕ້ເໝືອນນ້ຳໄຫລຖ້ວມ ຈະໂຈມຕີແຜ່ນດິນທີ່ຊົງສັນຍາໄວ້ດ້ວຍ. 41ຈະຂ້າ
ຄົນຕາຍເປັນໝື່ນໆ ສ່ວນປະເທດເອໂດມ ປະເທດໂມອາບ ແລະຄົນອຳໂມນທີ່ຍັງເຫລືອ ຈະ
ໄດ້ລອດພົ້ນ. 42ພະອົງຈະບຸກໂຈມຕີຫລາຍປະເທດ ແມ່ນແຕ່ປະເທດເອຢິບກໍຖືກໂຈມຕີ. 43ຈະ
ຂົນເອົາຂອງມີຄ່າທີ່ເປັນເງິນເປັນຄຳ ແລະຊັບສົມບັດມີຄ່າອື່ນໆ ຂອງປະເທດເອຢິບໄປ ຈະມີ-
ໄຊຊະນະເໜືອປະເທດລີເບຍ ແລະເອທີໂອເປຍ. 44ແລ້ວຂ່າວທີ່ມາຈາກທິດຕາເວັນອອກ
ແລະເໜືອຈະເຮັດໃຫ້ພະອົງຕົກໃຈ ພະອົງຈະສູ້ຮົບຢ່າງຫ້ຽມໂຫດ ຈະຂ້າຄົນເປັນຈຳນວນ
ຫລາຍ. 45ຈະກາງເຕັນຫລວງຂະໜາດໃຫຍ່ໄວ້ລະຫວ່າງທະເລກັບພູບ່ອນຕັ້ງພຣະວິຫານ ແຕ່
ຈະສິ້ນພະຊົນ ໂດຍບໍ່ມີໃຜທີ່ຈະຊ່ອຍພະອົງໄດ້.

# ບົດທີ 12

## ເວລາສິ້ນສຸດ

1ໃນເວລານັ້ນ ມີກາເອນເທວະດາຕົນຍິ່ງໃຫຍ່ ຜູ້ຮັກສາປະຊາຊົນຂອງເຈົ້າຈະມາປະກົດ
ແລ້ວຈະມີການທຸກຍາກລຳບາກຢ່າງທີ່ບໍ່ເຄີຍມີມາຕັ້ງແຕ່ຊາດທັງຫລາຍໄດ້ເກີດຂຶ້ນ ເມື່ອເຖິງ
ເວລານັ້ນ ປະຊາຊົນທັງປວງຂອງເຈົ້າ ຊຶ່ງມີຊື່ຂຽນໄວ້ໃນໜັງສືຂອງພຣະເຈົ້າຈະໄດ້ລອດພົ້ນ.
2ຫລາຍຄົນໃນພວກເຫລົ່ານີ້ທີ່ໄດ້ຕາຍໄປແລ້ວ ຈະມີຊີວິດມາອີກ ບາງຄົນຈະມີຊີວິດຕະຫລອດ
ໄປ ບາງຄົນຈະໄດ້ຮັບຄວາມອັບອາຍຂາຍໜ້າຕະຫລອດໄປ. 3ຄົນທັງຫລາຍທີ່ສະຫລາດຈະ
ຮຸ່ງເຮືອງ ເໝືອນດວງດາວສະຫວ່າງເທິງທ້ອງຟ້າ ແລະຜູ້ທີ່ສັ່ງສອນຄົນທັງຫລາຍໃຫ້ເປັນຜູ້
ຊອບທຳ ຈະຮຸ່ງເຮືອງເໝືອນດວງດາວຕະຫລອດໄປ.

4ດານີເອນເອີຍ ບັດນີ້ເຈົ້າຈົ່ງຮຳໜັງສືມ້ວນນັ້ນໄວ້ ແລະຕີຕາປະທັບໄວ້ຈົນເຖິງເວລາສຸດ
ທ້າຍ ໃນເວລານັ້ນ ຄົນຈຳນວນຫລວງຫລາຍຈະແລ່ນເຕັ້ນຊອກຫາຄວາມເຂົ້າໃຈໃນສິ່ງທີ່ຈະ
ເກີດຂຶ້ນ."

5ຂ້າພະເຈົ້າ ດານີເອນ ໄດ້ເຫັນຄົນອື່ນອີກສອງຄົນຢືນຢູ່ ແຕ່ລະຄົນຢືນຢູ່ແຄມແມ່ນ້ຳຄົນລະ
ເບື້ອງ. 6ຄົນໜຶ່ງໄດ້ເວົ້າກັບຄົນທີ່ນຸ່ງຫົ່ມເຄື່ອງອັນສະຫງ່າງາມ ຊຶ່ງຢືນຢູ່ເໜືອນ້ຳຂຶ້ນໄປວ່າ,
"ຍັງອີກເທິງປານໃດສິ່ງອັດສະຈັນເຫລົ່ານີ້ຈະໝົດສິ້ນລົງ?" 7ຊາຍຜູ້ນຸ່ງເຄື່ອງອັນສະຫງ່າງາມ
ໄດ້ຍົກມືທັງສອງຂຶ້ນເທິງຟ້າ ແລະໄດ້ສັນຍາຢ່າງໜັກແໜ້ນ ໃນພຣະນາມຂອງພຣະເຈົ້າອົງຊົງ
ພຣະຊົນຢູ່ເປັນນິດ ຂ້າພະເຈົ້າໄດ້ຍິນເພິ່ນເວົ້າວ່າ, "ຈະເປັນເວລາໜຶ່ງ, ສອງເວລາ, ແລະເຄິ່ງ
ເວລາ ເມື່ອການປະຫັດປະຫານໄພ່ພົນຂອງພຣະເຈົ້າສິ້ນສຸດລົງແລ້ວ ສິ່ງທັງປວງເຫລົ່ານີ້ຈຶ່ງ

ຈະສິ້ນສຸດລົງ.”
8ຂ້າພະເຈົ້າໄດ້ຍິນສິ່ງທີ່ເພິ່ນເວົ້າ ແຕ່ຂ້າພະເຈົ້າບໍ່ເຂົ້າໃຈ ດັ່ງນັ້ນ ຂ້າພະເຈົ້າຈຶ່ງຖາມວ່າ,
“ນາຍເອີຍ ສິ່ງນີ້ຈະສິ້ນສຸດລົງໄດ້ຢ່າງໃດ?”
9ເພິ່ນໄດ້ຕອບວ່າ, “ດານີເອນເອີຍ ເຈົ້າຈົ່ງໄປເສຍດຽວນີ້ ເພາະຄຳເວົ້າເຫລົ່ານີ້ຈະຖືກປົກ
ປິດໄວ້ເປັນຄວາມລັບ ຈົນກວ່າເວລາສິ້ນສຸດນັ້ນໄດ້ມາເຖິງ. 10ປະຊາຊົນຈຳນວນຫລາຍຈະຂາວ
ສະອາດບໍລິສຸດ ຄົນທັງຫລາຍຈະບໍ່ເຂົ້າໃຈ ພວກເຂົາຈະຍັງເປັນຄົນຊົ່ວຢູ່ຕໍ່ໄປ ແຕ່ຄົນທັງ-
ຫລາຍທີ່ສະຫລາດຈະເຂົ້າໃຈ. 11ຕັ້ງແຕ່ເວລາທີ່ພວກເຂົາເລີກເຄື່ອງເຜົາບູຊາປະຈຳວັນ ແລະ
ຕັ້ງສິ່ງແປກປະຫລາດອັນໜ້າຢ້ານໄວ້ ໄປຈົນເຖິງເວລາສິ້ນສຸດຈະເປັນເວລາ 1.290 ມື້.
12ແລ້ວຄວາມສຸກຈະມີກັບຄົນທັງຫລາຍທີ່ຍັງຕັ້ງໝັ້ນຢູ່ໃນຄວາມເຊື່ອເປັນເວລາ 1.335 ມື້.
13ດານີເອນເອີຍ ເຈົ້າຈົ່ງເຊື່ອໄປຈົນເທົ່າມື້ຕາຍ ແລ້ວເຈົ້າຈະໄດ້ເປັນຜູ້ລຸກຂຶ້ນມາຮັບເອົາລາ-
ງວັນຂອງເຈົ້າ ໃນເວລາສິ້ນສຸດໂລກ.”

* * *

# ໂຮເຊອາ

## ບົດທີ 1

[1]ໜັງສືສະບັບນີ້ໄດ້ບັນຈຸພຣະຄຳຊຶ່ງ ພຣະຜູ້ເປັນເຈົ້າ ໄດ້ປະກາດແກ່ ໂຮເຊອາ ລູກຊາຍຂອງ
ເບເອຣີ ໃນຕອນທີ່ອຸດຊີຢາ ໂຢທາມ ອາຮາດ ແລະເຮເຊກີຢາ ເປັນກະສັດຢູດາ ແລະໃນ
ຕອນທີ່ ເຢໂຣໂບອາມລູກຊາຍຂອງ ໂຢອາດ ເປັນກະສັດອິສຣາເອນ.

### ເມຍ ແລະລູກຂອງໂຮເຊອາ

[2]ເມື່ອພຣະຜູ້ເປັນເຈົ້າຊົງກ່າວຕໍ່ອິສຣາເອນ ຜ່ານທາງໂຮເຊອາທຳອິດນັ້ນ ພຣະອົງຊົງກ່າວ
ກັບເພິ່ນວ່າ "ຈົ່ງໄປແຕ່ງງານກັບຍິງໂສເພນີ ແລ້ວເຮັດໃຫ້ນາງມີລູກ ເພາະວ່າ ປະຊາຊົນຂອງ
ປະເທດນີ້ບໍ່ສັດຊື່ຕໍ່ເຮົາ ແລະຂາບໄຫວ້ພະອື່ນ."

[3]ດ້ວຍເຫດນີ້ ໂຮເຊອາຈຶ່ງແຕ່ງງານກັບນາງໂກເມ ລູກສາວຂອງດິບລາຢິມ ແລ້ວນາງໄດ້
ຖືພາ ແລະອອກລູກມາເປັນຜູ້ຊາຍ. [4]ພຣະຜູ້ເປັນເຈົ້າຊົງກ່າວວ່າ "ຈົ່ງຕັ້ງຊື່ໃຫ້ມັນວ່າ ເຢດຊະ-
ເຣເອນ ເພາະວ່າຍັງອີກບໍ່ເຖິງ ເຮົາຈະລົງໂທດກະສັດອິສຣາເອນ ເນື່ອງຈາກວ່າເຢຮູ ບັນ-
ພະບູລຸດຂອງພະອົງໄດ້ສັງຫານຫລາຍຄົນທີ່ເຢດຊະເຣເອນ ເຮົາຈະເຮັດໃຫ້ລາຊະອານາຈັກອິ-
ສຣາເອນສິ້ນສຸດລົງ. [5]ແລະໃນຕອນນັ້ນ ເຮົາຈະທຳລາຍອຳນາດທາງທະຫານຂອງອິສຣາເອນ
ທີ່ຮ່ອມພູເຢດຊະເຣເອນ."

[6]ຕໍ່ມາ ນາງໂກເມໄດ້ຖືພາອີກ ແລະໄດ້ອອກລູກມາເປັນຍິງ ພຣະຜູ້ເປັນເຈົ້າຈຶ່ງຊົງກ່າວຕໍ່
ໂຮເຊອາວ່າ "ຈົ່ງຕັ້ງຊື່ໃຫ້ມັນວ່າ ໂລຣຸຮາມາ ເພາະວ່າເຮົາຈະບໍ່ສົງສານຫລືໃຫ້ອະໄພປະຊາຊົນ
ອິສຣາເອນອີກຕໍ່ໄປ. [7]ແຕ່ຈະສົງສານປະຊາຊົນຢູດາ ເຮົາຄືພຣະຜູ້ເປັນເຈົ້າຂອງພວກເຂົາຈະ
ຊ່ອຍພວກເຂົາໃຫ້ພົ້ນ ແຕ່ບໍ່ແມ່ນດ້ວຍສົງສານ ບໍ່ແມ່ນດ້ວຍດາບ ຫລືໜ້າທະນູ ແລະບໍ່ແມ່ນ
ດ້ວຍມ້າ ຫລືເຫລົ່າທະຫານມ້າ.

[8]ຫລັງຈາກນາງໂກເມໄດ້ໃຫ້ນາງໂລຣຸຮາມາຢ່ານົມແລ້ວນາງກໍຖືພາ ແລະໄດ້ລູກຊາຍອີກຜູ້
ໜຶ່ງ. [9]ພຣະຜູ້ເປັນເຈົ້າຈຶ່ງຊົງກ່າວວ່າ "ຈົ່ງຕັ້ງຊື່ໃຫ້ມັນວ່າ ໂລອຳມີ ເພາະພວກເຈົ້າຊາວອິ-
ສຣາເອນບໍ່ແມ່ນໄພ່ພົນຂອງເຮົາ ແລະເຮົາກໍບໍ່ແມ່ນພຣະເຈົ້າຂອງພວກເຈົ້າ."

### ການສ້າງອິສຣາເອນຂຶ້ນໃໝ່

[10]ປະຊາຊົນອິສຣາເອນ ຈະມີຫລາຍເໝືອນເມັດຊາຍແຄມທະເລ ຊຶ່ງເກີນທີ່ຈະນັບ ຫລືຕັກ
ຕວງໄດ້ ດຽວນີ້ ພຣະເຈົ້າຊົງກ່າວຕໍ່ພວກເຂົາວ່າ, "ພວກເຈົ້າບໍ່ແມ່ນໄພ່ພົນຂອງເຮົາ" ແຕ່ໃນມື້-
ໜຶ່ງຈະຊົງກ່າວຕໍ່ພວກເຂົາວ່າ, "ພວກເຈົ້າເປັນລູກຂອງພຣະເຈົ້າອົງຊົງພຣະຊົນຢູ່." [11]ປະຊາ-
ຊົນຢູດາ ແລະອິສຣາເອນຈະຮ່ວມເຂົ້າກັນໃໝ່ ພວກເຂົາຈະເລືອກເອົາຜູ້ນຳຄົນໜຶ່ງເປັນຜູ້ນຳ
ຂອງຕົນ ພວກເຂົາຈະຮຸ່ງເຮືອງ ແລະອຸດົມສົມບູນອີກເທື່ອໜຶ່ງ ສະໄໝຂອງເຢດຊະເຣເອນຈະ
ຍິ່ງໃຫຍ່.

# ບົດທີ 2

[1]ຈົ່ງເອີ້ນຄົນ ອິສຣາເອນ ອ້າຍເອື້ອຍນ້ອງຂອງເຈົ້າວ່າ "ໄພ່ພົນຂອງພຣະເຈົ້າ" ແລະ "ຜູ້ໄດ້
ຮັບຄວາມສົງສານຈາກພຣະຜູ້ເປັນເຈົ້າ."

## ນາງໂກເມ ແລະອິສຣາເອນບໍ່ສັດຊື່

[2]ລູກເອີຍ ຈົ່ງຮ້ອງຂໍຕໍ່ແມ່ຂອງເຈົ້າ ເຖິງແມ່ນວ່ານາງບໍ່ເປັນເມຍຂອງເຮົາອີກຕໍ່ໄປ ແລະເຮົາ
ກໍບໍ່ເປັນຜົວຂອງນາງອີກກໍດີ ຈົ່ງຮ້ອງຂໍໃຫ້ນາງເຊົາຫລິ້ນຊູ້ ແລະເປັນໂສເພນີເສຍ. [3]ຖ້ານາງບໍ່
ເຊົາ ເຮົາຈະເປືອຍກາຍນາງໃຫ້ເໝືອນກັບມື້ນາງເກີດ ຈະເຮັດໃຫ້ເປັນເໝືອນດິນທີ່ແຫ້ງແລ້ງ
ແລະກັນດານ ນາງຈະຫິວນໍ້າຕາຍ. [4]ເຮົາຈະບໍ່ສົງສານລູກຂອງນາງ ເພາະພວກເຂົາເປັນລູກຊູ້
ນາງເປັນໂສເພນີທີ່ບໍ່ມີຄວາມອາຍ. [5]ນາງເປັນໂສເພນີທີ່ບໍ່ມີຄວາມອັບອາຍ ແລະເວົ້າວ່າ "ຂ້ອຍ
ຈະຕິດຕາມຄົນຮັກຂອງຂ້ອຍໄປ ເພາະວ່າ ລາວໄດ້ເອົາອາຫານ ນໍ້າດື່ມ ເຄື່ອງຂົນແກະ ຜ້າ-
ໄໝ ນໍ້າມັນ ແລະເຄື່ອງດື່ມໃຫ້ແກ່ຂ້ອຍ."

[6]ດ້ວຍເຫດນັ້ນ ເຮົາຈະປິດກັ້ນນາງດ້ວຍໜາມ ຈະສ້າງກຳແພງອ້ອມບໍ່ໃຫ້ນາງອອກໄປໄດ້.
[7]ນາງຈະແລ່ນຕິດຕາມພວກຄົນຮັກໄປ ແຕ່ຈະບໍ່ທັນພວກເຂົາ ນາງຈະຊອກຫາພວກເຂົາ ແຕ່
ຈະບໍ່ພົບ ແລ້ວນາງເວົ້າວ່າ "ຂ້ອຍຈະກັບຄືນໄປຫາຜົວເກົ່າຂອງຂ້ອຍ ເພາະແຕ່ກ່ອນນັ້ນຂ້ອຍ
ສຸກສະບາຍກວ່າດຽວນີ້."

[8]ນາງບໍ່ຮູ້ເລີຍວ່າ ເຮົາເປັນຜູ້ທີ່ເອົາເຂົ້າ ເຫລົ້າອະງຸ່ນແລະນໍ້າມັນສົດໃຫ້ແກ່ນາງ ເຮົາໄດ້ໃຫ້
ເງິນຄຳແກ່ນາງເປັນຈຳນວນຫລາຍ ແຕ່ນາງໄດ້ເອົາໄປໃຊ້ສຳລັບພະບາອານເສຍ. [9]ດັ່ງນັ້ນ
ໃນເວລາເກັບກ່ຽວ ເຮົາຈະເອົາເຂົ້າ ແລະເຫລົ້າອະງຸ່ນທີ່ເຮົາໃຫ້ແກ່ນາງຄືນມາ ຈະເອົາຂົນແກະ
ແລະຜ້າໄໝທີ່ເຮົາໃຫ້ນາງນຸ່ງຫົ່ມໜີໄປ. [10]ແລ້ວຈະເປືອຍກາຍນາງຕໍ່ໜ້າພວກຄົນຮັກຂອງນາງ
ແລະຈະບໍ່ມີໃຜຊ່ອຍນາງໃຫ້ພົ້ນຈາກອຳນາດຂອງເຮົາ. [11]ເຮົາຈະເຮັດໃຫ້ຄວາມມ່ວນຊື່ນທັງ
ປວງ ເຮັດໃຫ້ງານກິນລ້ຽງ ວັນສັກສິດປະຈຳເດືອນ ງານສະຫລອງປະຈຳອາທິດ ແລະງານ
ຊຸມນຸມທາງສາດສະໜາທັງປວງຂອງນາງສິ້ນສຸດລົງ. [12]ຈະທຳລາຍຕົ້ນອະງຸ່ນ ແລະຕົ້ນເດື່ອ
ເທດຂອງນາງ ຊຶ່ງນາງໄດ້ເວົ້າວ່າ ພວກຄົນຮັກໄດ້ໃຫ້ຂ້ອຍເພື່ອເປັນຄ່າຮັບໃຊ້ພວກເຂົາ ເຮົາ
ຈະເອົາສວນອະງຸ່ນ ແລະເຮັດໃຫ້ສວນທັງຫລາຍຂອງນາງເປັນປ່າ ໃຫ້ພວກສັດປ່າທຳລາຍ
ເສຍ. [13]ຍ້ອນນາງເຜົາເຄື່ອງຫອມບູຊາພະບາອານ ແລະໃສ່ເຄື່ອງເພັດຕິດຕາມຄົນຮັກໄປ ເຮົາ
ຈຶ່ງຈະລົງໂທດນາງ ເພາະວ່ານາງໄດ້ລືມເຮົາໃນຕອນນັ້ນ ພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ແຫລະ.

## ພຣະຜູ້ເປັນເຈົ້າຊົງຮັກໄພ່ພົນຂອງພຣະອົງ

[14]ດ້ວຍເຫດນັ້ນ ເຮົາຈະອອຍນາງດ້ວຍຄຳອ່ອນຫວານ ແລ້ວຈະພານາງໄປຍັງຖິ່ນແຫ້ງແລ້ງ
ກັນດານອີກ ແລະຈະເວົ້າກັບນາງຢ່າງເປີດອົກວ່າ [15]ເຮົາຈະຄືນສວນອະງຸ່ນໃຫ້ແກ່ນາງອີກ
ແລະຈະເຮັດໃຫ້ຮ່ອມພູຍາກລຳບາກເປັນພູແຫ່ງຄວາມຫວັງ ນາງຈະຕອບແທນເຮົາຢູ່ທີ່ນັ້ນ
ເໝືອນຄາວຍັງສາວ ຄືເມື່ອຄາວທີ່ໜີອອກຈາກປະເທດເອຢິບນັ້ນ. [16]ແລ້ວນາງຈະເອີ້ນເຮົາວ່າ
ຜົວຂອງນາງ ຈະບໍ່ເອີ້ນວ່າບາອານຂອງນາງຕໍ່ໄປ. [17]ເຮົາຈະບໍ່ໃຫ້ນາງອອກປາກເວົ້າວ່າພະ-
ບາອານອີກເລີຍ.

[18]ໃນເວລານັ້ນ ເຮົາຈະເຮັດສັນຍາກັບສັດປ່າ ຝູງນົກທັງປວງ ແລະສັດເລືອຄານເທິງແຜ່ນ-
ດິນ ເພື່ອບໍ່ໃຫ້ມັນທຳຮ້າຍໄພ່ພົນຂອງເຮົາ ເຮົາຈະເອົາດາບ ແລະລູກທະນູທັງປວງໜີຈາກ
ແຜ່ນດິນໄປ ແລະບໍ່ໃຫ້ມີເສິກສົງຄາມອີກຕໍ່ໄປ ເພື່ອໃຫ້ໄພ່ພົນຂອງເຮົາມີຊີວິດຢູ່ຢ່າງສຸກສະ-
ບາຍ ແລະປອດໄພ.

[19] ອິສຣາເອນເອີຍ ເຮົາຈະໝັ້ນເຈົ້າໄວ້ເປັນເຈົ້າສາວຂອງເຮົາ
ເຮົາຈະໝັ້ນເຈົ້າໄວ້ຢ່າງຖືກຕ້ອງ ແລະທ່ຽງທຳ
ໂດຍຈະສະແດງຄວາມຮັກໝັ້ນຄົງ ແລະຄວາມກະລຸນາ ຕໍ່ເຈົ້າ
ຈະໃຫ້ເຈົ້າເປັນຂອງເຮົາຕະຫລອດໄປ.
[20] ເຮົາຈະຮັກສາຄຳໝັ້ນສັນຍາຂອງເຮົາໄວ້ ແລະໃຫ້ເຈົ້າເປັນຂອງເຮົາ
ເຈົ້າຈະຮູ້ຈັກພຣະຜູ້ເປັນເຈົ້າ.
[21-22] ໃນເວລານັ້ນ ເຮົາຈະຕອບຄຳອ້ອນວອນຂອງໄພ່ພົນຂອງເຮົາ
ຈະໃຫ້ຝົນຕົກລົງມາຍັງໂລກ ຈະໃຫ້ແຜ່ນດິນມີເຂົ້າ
ມີໝາກອະງຸ່ນ ແລະໝາກກອກເທດ.
[23] ຈະໃຫ້ໄພ່ພົນຂອງເຮົາຢູ່ໃນແຜ່ນດິນ ແລະເຮັດໃຫ້ພວກເຂົາອຸດົມສົມບູນ
ຈະສົງສານພວກທີ່ຖືກເອີ້ນວ່າ “ບໍ່ໄດ້ຮັບຄວາມສົງສານ”
ແລະເຮົາຈະກ່າວຕໍ່ພວກທີ່ເຄີຍຖືກເອີ້ນມາກ່ອນແລ້ວວ່າ
“ພວກເຂົາບໍ່ແມ່ນໄພ່ພົນຂອງເຮົາ”
ວ່າ “ພວກເຈົ້າເປັນໄພ່ພົນຂອງເຮົາ”
ແລ້ວພວກເຂົາຈະຕອບວ່າ “ພຣະອົງຊົງເປັນພຣະເຈົ້າຂອງພວກຂ້ານ້ອຍ.”

# ບົດທີ 3

## ໂຮເຊອາກັບຜູ້ຍິງທີ່ບໍ່ສັດຊື່

[1]ພຣະຜູ້ເປັນເຈົ້າຊົງກ່າວຕໍ່ຂ້າພະເຈົ້າອີກວ່າ, “ຈົ່ງໄປຕິດຕໍ່ຮັກໄຄ່ກັບຍິງຫລິ້ນຊູ້ຄົນໜຶ່ງ ຊຶ່ງ
ມີຄູ່ຮັກຄົນໜຶ່ງແລ້ວ ຈົ່ງຮັກນາງເໝືອນຢ່າງເຮົາຮັກປະຊາຊົນອິສຣາເອນ ເພາະເຖິງແມ່ນວ່າ
ພວກເຂົາຄືນໄປຫາພະອື່ນ ແລະນິຍົມຖວາຍໝາກອະງຸ່ນແຫ້ງແກ່ຮູບເຄົາລົບທັງຫລາຍກໍຕາມ
ເຮົາກໍຍັງຮັກພວກເຂົາຢູ່.”
[2]ດັ່ງນັ້ນ ເຮົາຈຶ່ງຈ່າຍເງິນສິບຫລຽນ ກັບເຂົ້າເດືອຍສິບຫ້າໝື່ນຊື້ເອົານາງມາ. [3]ເຮົາໄດ້ບອກ
ນາງວ່າ ນາງຈະຕ້ອງບໍ່ເປັນໂສເພນີອີກ ຈະຕ້ອງບໍ່ສົມສູ່ຢູ່ຮ່ວມກັບຊາຍອື່ນ ຈະຕ້ອງຢູ່ນຳເຮົາ
ດົນໆ ແຕ່ຈະນອນນຳເຮົາບໍ່ໄດ້.
[4]ເລື່ອງນີ້ໝາຍຄວາມວ່າ ປະຊາຊົນອິສຣາເອນຈະຢູ່ຢ່າງບໍ່ມີກະສັດ ຫລືຜູ້ນຳເປັນເວລາເຫິງ
ນານ ແລະຈະບໍ່ມີເຄື່ອງເຜົາບູຊາ ຫລືຫີນສັກສິດ ບໍ່ມີຮູບເຄົາລົບ ຫລືຮູບບູຊາບອກເລື່ອງອະ-
ນາຄົດ. [5]ຫລັງຈາກນັ້ນ ປະຊາຊົນອິສຣາເອນຈະກັບຄືນໄປຫາພຣະຜູ້ເປັນເຈົ້າຂອງພວກເຂົາ
ອີກ ດ້ວຍຄວາມຢຳເກງ ແລະຈະກັບຄືນໄປຫາດາວິດ ກະສັດຂອງພວກເຂົາ ແລະຈະກັບຄືນ

ມາຫາຊັບສິນຂອງພວກເຂົາຕໍ່.

# ບົດທີ 4

## ພຣະຜູ້ເປັນເຈົ້າຊົງກ່າວໂທດອິສຣາເອນ

[1]ຊາວອິສຣາເອນເອີຍ ຈົ່ງຟັງພຣະຜູ້ເປັນເຈົ້າ ຊົງກ່າວໂທດປະຊາຊົນທີ່ອາໄສຢູ່ໃນປະເທດ
ນີ້ວ່າ ບໍ່ມີຄວາມສັດຊື່ ຫລືຄວາມຮັກໃນປະເທດນັ້ນ ປະຊາຊົນບໍ່ຮູ້ຈັກວ່າ ເຮົາເປັນພຣະເຈົ້າ.
[2]ພວກເຂົາໄດ້ເຮັດສັນຍາໄວ້ແຕ່ພວກເຂົາລະເມີດເອງ ພວກເຂົາຂີ້ຕົວະ ຄາດຕະກຳ ຂີ້ລັກ
ແລະລ່ວງເກີນຜົວເມຍຜູ້ອື່ນ ມີອາດຊະຍາກອນເພີ່ມຂຶ້ນ ແລະຂ້າລ້າງຜານຊຶ່ງກັນແລະກັນສືບຕໍ່
ໄປ.

[3]ດັ່ງນັ້ນ ປະເທດນີ້ຈຶ່ງແຫ້ງແລ້ງ ທຸກໆ ສິ່ງທີ່ມີຊີວິດຈະຕາຍໝົດ ສັດ ແລະນົກທັງປວງ
ແມ່ນແຕ່ປາກໍຈະຕາຍເສຍ.

## ພຣະຜູ້ເປັນເຈົ້າຊົງກ່າວໂທດພວກປະໂລຫິດ

[4]ພຣະຜູ້ເປັນເຈົ້າຊົງກ່າວວ່າ, "ປະໂລຫິດຢ່າກ່າວໂທດ ຫລືຕິຕຽນປະຊາຊົນ ເພາະວ່າເຮົາ
ກ່າວໂທດພວກເຈົ້າ. [5]ການທຳງານທັງກາງເວັນ ແລະກາງຄືນຂອງພວກເຈົ້າກໍໃຊ້ບໍ່ໄດ້ ພວກຜູ້
ປະກາດພຣະທຳກໍບໍ່ດີໄປກວ່າເຈົ້າ ເຮົາຈະທຳລາຍອິສຣາເອນຄືແມ່ຂອງເຈົ້າ. [6]ໄພ່ພົນຂອງເຮົາ
ກໍຖືກທຳລາຍ ເພາະພວກເຂົາບໍ່ຮັບຮູ້ເຮົາ ພວກເຈົ້າຜູ້ເປັນປະໂລຫິດກໍບໍ່ຍອມຮັບຮູ້ເຮົາຄືກັນ
ແລະໄດ້ປະຖິ້ມຄຳສອນຂອງເຮົາ ດັ່ງນັ້ນ ເຮົາຈຶ່ງບໍ່ຍອມຮັບເອົາເຈົ້າກັບລູກຂອງເຈົ້າເປັນປະ-
ໂລຫິດຂອງເຮົາ.

[7]ຈຳນວນປະໂລຫິດຫລາຍຂຶ້ນເທົ່າໃດ ການເຮັດບາບຕໍ່ສູ້ເຮົາກໍຫລາຍຂຶ້ນເທົ່ານັ້ນ ເຮົາຈະ
ທຳລາຍຊື່ສຽງຂອງພວກເຂົາໃຫ້ໝົດໄປ. [8]ພວກເຂົາຮັ່ງມີຂຶ້ນຍ້ອນໄພ່ພົນຂອງເຮົາເຮັດບາບ
ແລະພວກເຂົາຢາກໃຫ້ໄພ່ພົນຂອງເຮົາເຮັດບາບຫລາຍຂຶ້ນອີກ. [9]ປະໂລຫິດໄດ້ຮັບໂທດຢ່າງໃດ
ປະຊາຊົນກໍຈະໄດ້ຮັບໂທດຢ່າງນັ້ນ ເຮົາຈະລົງໂທດ ແລະຕອບແທນຄວາມຊົ່ວທີ່ພວກເຂົາໄດ້
ເຮັດ. [10]ແມ່ນວ່າພວກເຂົາໄດ້ກິນແຕ່ກໍຈະຍັງຢາກຢູ່ ພວກເຂົາຂາບໄຫວ້ພະທີ່ໃຫ້ເກີດຄວາມອຸ-
ດົມສົມບູນ ແຕ່ຈະຍັງບໍ່ມີລູກ ເພາະພວກເຂົາໜີຈາກເຮົາໄປບົວລະບັດພະອື່ນ."

## ພຣະຜູ້ເປັນເຈົ້າຊົງຕິຕຽນການຂາບໄຫວ້ພະຕ່າງໆ

[11-12]ເຫລົ້າອະງຸ່ນໄດ້ເຮັດໃຫ້ໄພ່ພົນຂອງເຮົາລືມຕົວ ພວກເຂົາຂໍຮ້ອງໃຫ້ສິ່ງທີ່ເຮັດດ້ວຍໄມ້
ຫລືໄມ້ເທົ້າເປີດເຜີຍໃຫ້ຮູ້ ພວກເຂົາໄດ້ປະຖິ້ມເຮົາ ແລະຖວາຍຕົນເອງແກ່ພະອື່ນ ເໝືອນຜູ້ຍິງ
ທີ່ກາຍເປັນໂສເພນີ. [13]ພວກເຂົາຖວາຍເຄື່ອງບູຊາ ຢູ່ສະຖານທີ່ສັກສິດເທິງຈອມພູ ໄດ້ເຜົາ
ເຄື່ອງຫອມບູຊາຢູ່ເທິງພູນ້ອຍ ແລະຢູ່ກ້ອງຕົ້ນໄມ້ສູງ ເພາະມີຮົ່ມເຢັນດີ. ດ້ວຍເຫດນີ້ແຫລະ,
ພວກລູກສາວຂອງເຈົ້າຈຶ່ງເປັນໂສເພນີ ແລະພວກລູກໄພ້ກໍຫລິ້ນຊູ້. [14]ເຮົາຈະຍັງບໍ່ລົງໂທດພວກ
ເຂົາຍ້ອນການເຮັດດັ່ງນີ້ ເພາະວ່າພວກເຈົ້າເອງກໍຫລົງໄປກັບໂສເພນີທີ່ມີຢູ່ໃນວິຫານຂອງພະ-
ບາອານ ແລະເຜົາເຄື່ອງບູຊາຖວາຍພະບາອານຮ່ວມກັບພວກເຂົາ ດັ່ງສຸພາສິດກ່າວວ່າ, "ປະ-
ຊາຊົນທີ່ຂາດປັນຍາ ຈະເຖິງຄວາມຈິບຫາຍ."

15ເຖິງແມ່ນປະຊາຊົນອິສຣາເອນບໍ່ສັດຊື່ຕໍ່ເຮົາ ກໍຂໍໃຫ້ປະຊາຊົນຢູດາຢ່າເຮັດຜິດໃນສິ່ງດຽວ
ກັນນັ້ນ ຢ່າໄປຂາບໄຫວ້ໃນເມືອງກິນການ ຫລືເບັດ-ອາເວນ ແລະຢ່າເຮັດສັນຍາຢູ່ທີ່ນັ້ນໃນ
ນາມຂອງພຣະຜູ້ເປັນເຈົ້າ ຜູ້ຊົງພຣະຊົນຢູ່. 16ປະຊາຊົນອິສຣາເອນນັ້ນດື້ດຶງເໝືອນລໍປ່າ ດັ່ງ-
ນັ້ນ ເຮົາຈະລ້ຽງພວກເຂົາເໝືອນລ້ຽງແກະໃນທົ່ງຫຍ້າໄດ້ຢ່າງໃດ.

17-18ພວກເຂົາຢູ່ໃຕ້ອຳນາດຮູບເຄົາລົບທັງຫລາຍ ໄດ້ເຂົ້າຮ່ວມກຸ່ມກັບຄົນຂີ້ເມົາ ຍ່າງໄປກັບ
ພວກໂສເພນີ ແລະມັກເຮັດໃຫ້ເສຍຊື່ສຽງຫລາຍກວ່າມີຊື່ສຽງ. 19ພວກເຂົາເຮັດໄປຍ້ອນໃຈຊົ່ວ
ຄວາມຊົ່ວນັ້ນຈະກວາດພວກເຂົາໄປເໝືອນລົມພະຍຸ ແລະພະທີ່ພວກເຂົາຂາບໄຫວ້ ຈະຊ່ອຍ
ເຫລືອຫຍັງກໍບໍ່ໄດ້.

# ບົດທີ 5

1ປະໂລຫິດເອີຍ ຈົ່ງຟັງຂໍ້ນີ້ ປະຊາຊົນອິສຣາເອນເອີຍ ຈົ່ງລະມັດລະວັງເດີ້! ພວກເຈົ້າຜູ້
ເປັນເຊື້ອກະສັດຈົ່ງຟັງເດີ້! ພວກເຈົ້າຄວນເປັນຜູ້ໃຫ້ຄວາມຍຸດຕິທຳ ບັດນີ້ ພວກເຈົ້າເປັນເໝືອນ
ແຮ້ວທີ່ເມືອງມິດຊະປາ ເປັນເໝືອນຂ່າຍກາງຢູ່ເທິງພູຕາໂບ. 2ແລະເປັນເໝືອນຂຸມເລິກທີ່ເມືອງ
ຊິດຕິມ ເຮົາຈະລົງໂທດພວກເຈົ້າທັງໝົດ. 3ເຮົາຮູ້ວ່າເອຟຣາຢິມຄື ອິສຣາເອນເປັນຢ່າງໃດ
ມັນຈະລີ້ເຮົາບໍ່ໄດ້ ມັນບໍ່ສັດຊື່ຕໍ່ເຮົາ ແລະພົນລະເມືອງຂອງມັນກໍມີມົນທິນ."

## ໂຮເຊອາຕຳໜິການບູຊາຮູບເຄົາລົບ

4ຄວາມຊົ່ວທີ່ປະຊາຊົນເຮັດນັ້ນ ໄດ້ຂັດຂວາງບໍ່ໃຫ້ພວກເຂົາກັບຄືນໄປຫາພຣະເຈົ້າຂອງຕົນ
ພວກເຂົາຍອມຢູ່ໃຕ້ອຳນາດຮູບເຄົາລົບ ບໍ່ຮັບຮູ້ພຣະຜູ້ເປັນເຈົ້າ. 5ຄວາມອວດອ້າງຈອງຫອງ
ຂອງອິສຣາເອນສົ່ງສຽງຮ້ອງຕໍ່ຕ້ານເຮົາ ພວກເຂົາໄດ້ຕຳສະດຸດລົ້ມລົງຍ້ອນບາບຂອງຕົນ ຊາວ
ຢູດາກໍຈະລົ້ມລົງເໝືອນກັນ. 6ຝູງແກະ ແລະງົວຈະຖືກເຂົານຳໄປເຜົາບູຊາແດ່ພຣະຜູ້ເປັນເຈົ້າ
ແຕ່ພວກເຂົາຈະບໍ່ພົບພຣະອົງ ແລະບໍ່ໄດ້ປະໂຫຍດຫຍັງ ເພາະພຣະອົງຊົງໜີຫ່າງຈາກພວກ
ເຂົາໄປແລ້ວ. 7ພວກເຂົາໄດ້ເຮັດບໍ່ສັດຊື່ ແລະທໍລະຍົດຕໍ່ພຣະຜູ້ເປັນເຈົ້າ ລູກຂອງພວກເຂົາກໍ
ບໍ່ເປັນຂອງພຣະອົງ ດັ່ງນັ້ນແຫລະ, ມໍລະດົກຂອງພວກເຂົາ ແລະພວກເຂົາເອງຈຶ່ງຈະຖືກທຳ-
ລາຍ.

## ສົງຄາມລະຫວ່າງຊາວຢູດາກັບອິສຣາເອນ

8ຊາວເບັນຢາມິນເອີຍ! ຈົ່ງເປົ່າແກເຕືອນບອກສົງຄາມທີ່ເມືອງກິເບອາ! ແລະທີ່ເມືອງຣາມາ
ດ້ວຍ ຈົ່ງຟັງສຽງສັນຍານໄພໃນສະໜາມຮົບທີ່ເບັດ-ອາເວນ 9ເມື່ອການພິພາກສາລົງໂທດມາ
ເຖິງ ຊາວເອຟຣາຢິມຈະຈິບຫາຍໃນມື້ນັ້ນ ອິສຣາເອນເອີຍ ສິ່ງນັ້ນຈະເກີດຂຶ້ນແນ່ນອນ."

10ພຣະຜູ້ເປັນເຈົ້າຊົງກ່າວວ່າ, "ເຮົາຮ້າຍຍ້ອນວ່າພວກຜູ້ນຳຊາວຢູດາໄດ້ລັກໂລບເອົາຊາວ
ອິສຣາເອນ ເຮົາຈະລົງໂທດພວກເຂົາເໝືອນກັບນ້ຳຖ້ວມ. 11ເອຟຣາຢິມຕົກຢູ່ໃນຄວາມລຳບາກ
ໄດ້ສູນເສຍແຜ່ນດິນຂອງຕົນ ເພາະວ່າພວກເຂົາຂໍຄວາມຊ່ອຍເຫລືອນຳຜູ້ອື່ນ ທີ່ບໍ່ສາມາດຊ່ອຍ
ໄດ້. 12ດັ່ງນັ້ນ ເຮົາຈຶ່ງຈະນຳໄພພິບັດມາຍັງເອຟຣາຢິມ ແລະຊາວຢູດາ.

13ເມື່ອໃດເອຟຣາຢິມເຈັບໄຂ້ ແລະຢູດາມີບາດແຜ ເມື່ອນັ້ນ ເອຟຣາຢິມກໍໄປຍັງປະເທດ

ອັດຊີເຣຍ ເພື່ອຂໍໃຫ້ມະຫາກະສັດຊົງຊ່ອຍເຫລືອ ແຕ່ພະອົງຈະບໍ່ສາມາດຮັກສາ ຫລືປິ່ນປົວ
ບາດແຜໃຫ້ດີໄດ້. 14ເຮົາຈະໂຈມຕີປະຊາຊົນເອຟຣາຢິມ ແລະຢູດາເໝືອນສິງໂຕແຂງແຮງ
ແລະຈີກພວກເຂົາເປັນຕ່ອນໆ ແລ້ວແກ່ໜີໄປ ຈະບໍ່ມີໃຜຊ່ອຍເຫລືອພວກເຂົາໄດ້. 15ເຮົາຈະໜີ
ຈາກໄພ່ພົນຂອງເຮົາໄປ ຈົນກວ່າພວກເຂົາຈະໄດ້ທົນທຸກຍ້ອນບາບຂອງຕົນ ແລະສະແຫວງຫາ
ເຮົາ ແລ້ວບາງທີຍ້ອນຄວາມທຸກນັ້ນ ພວກເຂົາອາດຈະກັບຄືນມາຫາເຮົາ.”

# ບົດທີ 6

## ປະຊາຊົນເວົ້າເຖິງການກັບຄືນໄປຫາພຣະຜູ້ເປັນເຈົ້າ

1ໃຫ້ພວກເຮົາກັບຄືນໄປຫາພຣະຜູ້ເປັນເຈົ້າເທາະ ພຣະອົງໄດ້ຊົງທຸບຕີພວກເຮົາ ແຕ່ຈະຊົງ
ຮັກສາພວກເຮົາໃຫ້ດີ ຊົງເຮັດໃຫ້ພວກເຮົາມີບາດແຜ ແຕ່ຈະຊົງພັນບາດແຜໃຫ້. 2ຫລັງຈາກນັ້ນ
ສອງມື້ ພຣະອົງຈະຊົງໃຫ້ພວກເຮົາຄ່ອຍດີຂຶ້ນ ໃນມື້ທີສາມ ຈະເຮັດໃຫ້ດີຄືເກົ່າ ແລ້ວພວກເຮົາ
ກໍຈະມີຊີວິດຢູ່ຊ້ອງພຣະພັກຂອງພຣະອົງ. 3ໃຫ້ພວກເຮົາພະຍາຍາມຮູ້ຈັກພຣະຜູ້ເປັນເຈົ້າແນ່-
ນອນ ພຣະອົງຈະສະເດັດມາຫາເຮົາເໝືອນຮຸ່ງອະລຸນ ຈະສະເດັດມາເໝືອນດັ່ງຝົນຕົກແນ່ນອນ
ເໝືອນດັ່ງທ່າຝົນທີ່ຕົກລົງໃສ່ແຜ່ນດິນ.

## ຄໍາຕອບຂອງພຣະຜູ້ເປັນເຈົ້າ

4ພຣະຜູ້ເປັນເຈົ້າຊົງກ່າວວ່າ “ເອຟຣາຢິມ ແລະຢູດາເອີຍ ເຮົາຈະເຮັດແນວໃດນໍາກັບພວກ
ເຈົ້າ ຄວາມຮັກທີ່ພວກເຈົ້າມີຕໍ່ເຮົາກໍຈືດຈາງ ແລະເຫີຍຫາຍໄປເໝືອນນໍ້າໝອກໃນຍາມເຊົ້າເມື່ອ
ຮຸ່ງອະລຸນ. 5ດັ່ງນັ້ນແຫລະ ເຮົາຈຶ່ງໃຊ້ຜູ້ປະກາດພຣະທໍາຂອງເຮົາ ນໍາເອົາຄໍາພິພາກສາໂທດ
ແລະການທໍາລາຍຂອງເຮົາມາສູ່ພວກເຈົ້າ ການພິພາກສາຂອງເຮົາກໍສ່ອງອອກມາເໝືອນແສງ
ສະຫວ່າງ. 6ສິ່ງທີ່ເຮົາຕ້ອງການຫລາຍທີ່ສຸດກໍຄືໃຫ້ພວກເຈົ້າມີຄວາມຮັກໝັ້ນຄົງ ບໍ່ແມ່ນແຕ່
ດ້ວຍການຖວາຍບູຊາ ແຕ່ຢາກໃຫ້ພວກເຈົ້າຮູ້ຈັກເຮົາຫລາຍກວ່າ ການເຜົາສັດຖວາຍບູຊານັ້ນ.
7ແຕ່ເມື່ອປະຊາຊົນເຫລົ່ານີ້ເຂົ້າໄປໃນແຜ່ນດິນທີ່ໄດ້ສັນຍາໄວ້ ພວກເຂົາກໍລະເມີດຄໍາໝັ້ນ-
ສັນຍາທີ່ເຮົາໄດ້ເຮັດໄວ້ກັບພວກເຂົາ. 8ກີເລອາດເປັນນະຄອນທີ່ເຕັມໄປດ້ວຍຄົນຊົ່ວ ແລະ
ອາດຊະຍາກອນ. 9ປະໂລຫິດກໍເໝືອນກຸ່ມໂຈນທີ່ຄອຍດັກທໍາຮ້າຍຄົນ ແມ່ນແຕ່ຕາມຖະໜົນໄປ
ຍັງສະຖານທີ່ສັກສິດທີ່ເຊເຄັມກໍມີການຂ້າຄົນ. 10ພວກເຂົາເຮັດຊົ່ວດ້ວຍເຈດຕະນາ ເຮົາໄດ້
ເຫັນສິ່ງໜຶ່ງທີ່ໜ້າກຽດຊັງໃນເອຟຣາຢິມ ຄືໄພ່ພົນຂອງເຮົາໄດ້ເຮັດໃຫ້ຕົວເອງເສື່ອມເສຍ.
11ດ້ວຍການຂາບໄຫວ້ຮູບເຄົາລົບສໍາລັບຊາວຢູດານັ້ນ ເຮົາໄດ້ກໍານົດເວລາສໍາລັບລົງໂທດໄວ້
ແລ້ວ ຍ້ອນວ່າພວກເຂົາໄດ້ເຮັດການຊົ່ວເໝືອນກັນ.

# ບົດທີ 7

1ເມື່ອໃດທີ່ເຮົາຢາກໃຫ້ອິສຣາເອນ ໄພ່ພົນຂອງເຮົາດີຄືນເປັນປົກກະຕິ ແລະເກີດມັ່ງຄັ່ງສົມ-
ບູນອີກ ເຮົາກໍເຫັນຄວາມຊົ່ວຮ້າຍທັງປວງ ແລະການກະທໍາຊົ່ວຂອງພວກເຂົາ ພວກເຂົາໄດ້ສໍ້
ໂກງ ໄດ້ມ້າງເຮືອນເຂົ້າໄປລັກເອົາສິ່ງຂອງ ແລະລັກເອົາຄົນຕາມຖະໜົນໄປ. 2ພວກເຂົາບໍ່ເຄີຍ

ຄິດວ່າເຮົາຈະຈົດຈຳຄວາມຊົ່ວທັງປວງທີ່ພວກເຂົາໄດ້ເຮັດໄວ້ ບາບຂອງພວກເຂົາໄດ້ປິດລ້ອມ
ເຂົາຢູ່ ແລະຈະພົ້ນຈາກສາຍຕາຂອງເຮົາໄປບໍ່ໄດ້.”

## ພວກຄົນໃນພະລາຊະວັງຮວມກັນເປັນກະບົດ

[3]ພຣະຜູ້ເປັນເຈົ້າ ຊົງກ່າວວ່າ, “ຄົນທັງຫລາຍໄດ້ຫລອກລວງກະສັດ ແລະຂ້າລາຊະການ
ດ້ວຍອຸບາຍຊົ່ວຮ້າຍ. [4]ພວກເຂົາທັງໝົດເປັນຄົນທໍລະຍົດ ແລະບໍ່ສັດຊື່ ຄວາມຊົ່ວຂອງພວກ
ເຂົາເປັນເໝືອນເຕົາອົບເຂົ້າຈີ່ທີ່ຫຸ່ມຄວາມຮ້ອນໄວ້ ໂດຍບໍ່ຕ້ອງການໃສ່ໄຟຕື່ມອີກຈົນແປ້ງໂພງ
ອອກ. [5]ໃນງານພະລາຊະພິທີຂອງກະສັດນັ້ນ ພວກເຂົາໄດ້ເອົາເຫລົ້າອະງຸ່ນໃຫ້ກະສັດ ແລະ
ຂ້າລາຊະການຂອງພະອົງດື່ມຈົນເມົາ ແລະເສຍສະຕິໄປ. [6]ໃຈຂອງພວກເຂົາຮ້ອນຮົນດ້ວຍເລ້
ຫລ່ຽມເໝືອນເຕົາອົບ ຄວາມຮ້າຍໄດ້ມີຢູ່ໃນໃຈຂອງພວກເຂົາຕະຫລອດຄືນ ແລະໃນຕອນເຊົ້າ
ກໍລຸກວາບຂຶ້ນດັ່ງແປວໄຟ. [7]ພວກເຂົາໄດ້ຂ້າພວກຜູ້ປົກຄອງຂອງຕົນດ້ວຍຄວາມຄຽດແຄ້ນ ກະ-
ສັດທັງຫລາຍຂອງພວກເຂົາກໍຖືກລອບປົງພະຊົນຕິດຕໍ່ກັນໄປ ແຕ່ບໍ່ມີກະສັດອົງໃດອ້ອນວອນຂໍ
ໃຫ້ເຮົາຊ່ວຍເຫລືອເລີຍ.”

## ອິສຣາເອນກັບຊົນຊາດທັງຫລາຍ

[8]ພຣະຜູ້ເປັນເຈົ້າ ຊົງກ່າວວ່າ “ປະຊາຊົນ ເອຟຣາຢິມ ເໝືອນເຂົ້າຈີ່ບໍ່ສຸກ ພວກເຂົາໄວ້ເນື້ອ
ເຊື່ອໃຈຊົນຊາດທີ່ຢູ່ອ້ອມຮອບຕົນ. [9]ດ້ວຍການໄວ້ເນື້ອເຊື່ອໃຈຂອງຊາວຕ່າງຊາດນັ້ນ ພວກເຂົາ
ຈຶ່ງໄດ້ສູນເສຍເຫື່ອແຮງໄປໂດຍບໍ່ຮູ້ສຶກຕົວ ແມ່ນແຕ່ຜົມຂອງຕົນຫງອກ ແລະພວກເຂົາໃກ້ຈະ
ຕາຍພວກເຂົາກໍບໍ່ຮູ້ຈັກ. [10]ຄວາມອວດອ້າງຖືຕົວຂອງ ອິສຣາເອນ ໄດ້ຮ້ອງຕໍ່ສູ້ພວກເຂົາ ເຖິງ
ປານນັ້ນ ພວກເຂົາກໍບໍ່ກັບຄືນມາຫາເຮົາທີ່ເປັນ ພຣະຜູ້ເປັນເຈົ້າ ຂອງພວກເຂົາ. [11]ເອຟຣາຢິມ
ເປັນ ເໝືອນນົກກາງແກທີ່ໂງ່ຈ້າ ປະຊາຊົນ ເອຟຣາຢິມ ຮ້ອງຂໍຄວາມຊ່ວຍ ເຫລືອ ຈາກ ເອຢິບ
ກ່ອນ ແລ້ວແລ່ນໄປຫາ ອັດຊີເຣຍ. [12]ເມື່ອພວກເຂົາໄປ ເຮົາກໍຈະກາງຂ່າຍອອກຄຸບເອົາພວກ
ເຂົາເໝືອນດັ່ງຄຸບນົກ ເຮົາຈະລົງໂທດພວກເຂົາ ຍ້ອນຄວາມຊົ່ວທີ່ເຂົາໄດ້ເຮັດນັ້ນ.

[13]ພວກເຂົາຖືກຕັດສິນລົງໂທດຍ້ອນປະຖິ້ມເຮົາ ແລະເປັນກະບົດຕໍ່ສູ້ເຮົາ ພວກເຂົາຈະຖືກ
ທຳລາຍ ເຮົາຢາກຊ່ອຍພວກເຂົາໃຫ້ພົ້ນ ແຕ່ພວກເຂົາໄດ້ຂາບໄຫວ້ເຮົາຢ່າງບໍ່ຖືກຕ້ອງ. [14]ບໍ່ໄດ້
ອ້ອນວອນຕໍ່ເຮົາດ້ວຍໃຈຈິງ ແຕ່ໄດ້ນອນລົງແລ້ວຮ້ອງໄຫ້ ເມື່ອອ້ອນວອນຂໍເຂົ້າ ແລະເຫລົ້າ
ອະງຸ່ນກໍປາດຕົວເອງເໝືອນຄົນນອກສາດສະໜາ ພວກເຂົາເປັນກະບົດ! [15]ເຖິງແມ່ນວ່າ ເຮົາ
ໄດ້ອົບຮົມ ແລະເຮັດໃຫ້ພວກເຂົາແຂງແຮງຂຶ້ນ ພວກເຂົາກໍຍັງຄິດກະບົດຕໍ່ສູ້ເຮົາຢູ່. [16]ໄດ້ໜີ
ຈາກເຮົາໄປຫາພະອື່ນທີ່ບໍ່ມີລິດເດດ ຈະຝາກຄວາມໄວ້ໃຈໃນພວກເຂົາບໍ່ໄດ້ ເພາະພວກເຂົາ
ເປັນເໝືອນລູກທະນູຄົດ ພວກຜູ້ນຳຂອງພວກເຂົາໂອ້ອວດຢ່າງຈອງຫອງ ພວກເຂົາຈະຕາຍ
ຢ່າງທາລຸນ ແລະຊາວ ເອຢິບ ຈະຫົວຂວັນພວກເຂົາ.”

# ບົດທີ 8

## ພຣະຜູ້ເປັນເຈົ້າຊົງລົງໂທດອິສຣາເອນຍ້ອນການຂາບໄຫວ້ຮູບເຄົາລົບ

[1]ພຣະຜູ້ເປັນເຈົ້າ ຊົງກ່າວວ່າ, “ຈົ່ງເປົ່າແກປຸກ! ພວກສັດຕູກຳລັງເຕັ້ນເຂົ້າສວບເອົາແຜ່ນດິນ

ຂອງເຮົາເໝືອນນົກອິນຊີ ໄພ່ພົນຂອງເຮົາໄດ້ລະເມີດຄຳໝັ້ນສັນຍາທີ່ເຮົາໄດ້ໃຫ້ໄວ້ກັບພວກເຂົາ
ແລະໄດ້ຝ່າຝືນພຣະທຳຄຳສອນຂອງເຮົາ. 2ເຖິງແມ່ນວ່າພວກເຂົາເອີ້ນເຮົາວ່າເປັນພຣະເຈົ້າ
ຂອງພວກເຂົາ ແລະເວົ້າວ່າພວກເຂົາເປັນໄພ່ພົນຂອງເຮົາກໍຕາມ. 3ພວກເຂົາກໍປະຖິ້ມສິ່ງທີ່ດີ-
ງາມ ດ້ວຍເຫດນີ້ ສັດຕູຂອງພວກເຂົາຈຶ່ງຈະໄລ່ຕິດຕາມໄປ. 4ໄພ່ພົນຂອງເຮົາໄດ້ເລືອກເອົາ
ພວກກະສັດ ກັບພວກຜູ້ນຳໂດຍປາດສະຈາກການເຫັນດີຈາກເຮົາ ພວກເຂົາໄດ້ສ້າງຮູບເຄົາລົບ
ດ້ວຍເງິນ ແລະຄຳ ເພື່ອທຳລາຍພວກເຂົາເອງ. 5ເຮົາບໍ່ຍອມຮັບເອົາຮູບງົວຄຳທີ່ຊາວນະຄອນ
ຊາມາເຣຍຂາບໄຫວ້ ເຮົາຄຽດແຄ້ນພວກເຂົາ ສະນັ້ນ ພວກເຂົາຍັງຈະຖືກໂທດຢູ່ເຖິງປານໃດ
ນໍ. 6ນາຍຊ່າງອິສຣາເອນໄດ້ສ້າງຮູບເຄົາລົບ ຮູບນັ້ນບໍ່ແມ່ນພຣະເຈົ້າ ຮູບທີ່ຊາວນະຄອນຊາ-
ມາເຣຍຂາບໄຫວ້ຈະຖືກດັບສູນມຸ່ນທະລາຍໄປ. 7ເມື່ອພວກເຂົາຫວ່ານລົມ ພວກເຂົາກໍເກັບກ່ຽວ
ແຕ່ລົມພະຍຸ ຕົ້ນເຂົ້າທີ່ບໍ່ເກີດຮວງ ກໍໃຫ້ແປ້ງ ຫລືເຂົ້າຈີ່ບໍ່ໄດ້ ແຕ່ຖ້າມັນມີຮວງ ກໍເຮັດເຂົ້າຈີ່ໄດ້
ຊາວຕ່າງຊາດກໍຈະກິນເສຍ. 8ຊາວອິສຣາເອນທັງໝົດຈະຖືກເຂົາກືນກິນ ແລະທຳລາຍເສຍ
ບັດນີ້ ຊົນຊາດທັງຫລາຍຖືພວກເຂົາເປັນເໝືອນໄຫແຕກ.

9ທີ່ດື້ດ້ານເໝືອນລໍປ່າ ແລະປະພຶດຕາມໃຈຂອງຕົນເອງ ພວກເຂົາໄປຂໍຄວາມຊ່ອຍເຫລືອ
ຈາກປະເທດອັດຊີເຣຍ ແລະຂາຍຕົວເອງໃຫ້ຊົນຊາດອື່ນໆ ເພື່ອໃຫ້ໄດ້ຮັບຄວາມຄຸ້ມຄອງ.
10ບັດນີ້ ເຮົາຈະຮວບຮວມເອົາພວກເຂົາມາລົງໂທດ ບໍ່ເຖິງ ເມື່ອຖືກກະສັດອັດຊີເຣຍກົດຂີ່
ຂົ່ມເຫັງ ພວກເຂົາກໍຈະຊັກດີ້ນດ້ວຍຄວາມເຈັບປວດ.

11ຊາວເອຟຣາຢິມມີແທ່ນບູຊາສຳລັບລ້າງບາບຕື່ມຂຶ້ນເທົ່າໃດ ສະຖານທີ່ເຮັດບາບກໍຈະມີຕື່ມ
ຂຶ້ນເທົ່ານັ້ນ. 12ເຮົາໄດ້ຂຽນພຣະທຳບັນຍັດຫລາຍໆ ຂໍ້ໄວ້ຈົນນັບບໍ່ຖ້ວນສຳລັບປະຊາຊົນ ແຕ່
ພວກເຂົາໄດ້ປະຖິ້ມເສຍ ໂດຍຖືເປັນຂອງປະຫລາດ ແລະແປກປອມ. 13ພວກເຂົາມັກເຜົາສັດ
ຖວາຍບູຊາ ແລະກິນຊີ້ນນັ້ນ ແຕ່ເຮົາຄືພຣະຜູ້ເປັນເຈົ້າບໍ່ພໍໃຈໃນການກະທຳເຊັ່ນນັ້ນ ບັດນີ້
ເຮົາຈະຈົດຈຳບາບລົງໂທດພວກເຂົາຍ້ອນການນີ້ ໂດຍຈະສົ່ງພວກເຂົາຄືນໄປຍັງປະເທດເອຢິບ
ອີກ. 14ປະຊາຊົນອິສຣາເອນໄດ້ສ້າງພະລາຊະວັງທັງຫລາຍ ແຕ່ພວກເຂົາໄດ້ລືມຜູ້ສ້າງຕົວເອງ
ປະຊາຊົນຢູດາກໍ່ສ້າງນະຄອນທັງຫລາຍ ທີ່ມີກຳແພງປ້ອງກັນ ເຮົາຈະສົ່ງໄຟມາເຜົາຜານນະ-
ຄອນ ແລະທຳລາຍພະລາຊະວັງພວກເຂົາຖິ້ມ.”

# ບົດທີ 9

## ໂຮເຊອາປະກາດລົງໂທດອິສຣາເອນ

1ປະຊາຊົນອິສຣາເອນເອີຍ ຈົ່ງເຊົາສະເຫລີມສະຫລອງງານມະຫໍລະສົບຕ່າງໆເໝືອນຄົນ
ຕ່າງຊາດເຄີຍປະຕິບັດມາ ພວກເຈົ້າໄດ້ໜີຈາກພຣະເຈົ້າຂອງຕົນ ເຮັດບໍ່ສັດຊື່ຕໍ່ພຣະອົງ ແລະ
ໄດ້ຂາຍຕົວເອງໃຫ້ພະບາອານ ທົ່ວທັງປະເທດເປັນເໝືອນຍິງໂສເພນີ ພວກເຈົ້າຮັກແພງເຂົ້າທີ່
ພວກເຂົາຈ່າຍໃຫ້ເປັນຄ່າຕອບແທນ. 2ແຕ່ພວກເຈົ້າຈະບໍ່ມີເຂົ້າພໍກິນ ບໍ່ມີນ້ຳມັນສົດ ແລະເຫລົ້າ
ອະງຸ່ນ. 3ປະຊາຊົນເອຟຣາຢິມບໍ່ເຫລືອຢູ່ໃນດິນແດນຂອງພຣະຜູ້ເປັນເຈົ້າ ແຕ່ຈະກັບຄືນໄປ
ຍັງປະເທດເອຢິບ ແລະຈະຕ້ອງໄດ້ກິນອາຫານທີ່ມີມົນທິນໃນປະເທດອັດຊີເຣຍ. 4ຢູ່ໃນດິນ-

ແດນຕ່າງຊາດ ພວກເຂົາຈະຖວາຍເຫລົ້າອະງຸ່ນແດ່ພຣະຜູ້ເປັນເຈົ້າບໍ່ໄດ້ ຫລືຈະນຳເຄື່ອງເຜົາ
ບູຊາໄປຖວາຍແດ່ພຣະອົງກໍບໍ່ໄດ້ ຄົນທັງຫລາຍທີ່ກິນອາຫານຂອງພວກເຂົາຈະມີມົນທິນ ຈະ
ເໝືອນກັບກິນອາຫານໃນງານສົບ ອາຫານຂອງພວກເຂົາໃຊ້ສຳລັບກິນແກ້ຫິວເທົ່ານັ້ນ ຈະນຳ-
ໄປຍັງພຣະວິຫານຂອງພຣະຜູ້ເປັນເຈົ້າບໍ່ໄດ້. [5]ສະນັ້ນ ເມື່ອຮອດມື້ເທດສະການກິນລ້ຽງຖວາຍ
ພຣະຜູ້ເປັນເຈົ້າ ພວກເຂົາຈະເຮັດແນວໃດ. [6]ເມື່ອໄພພິບັດມາເຖິງ ປະຊາຊົນຈະແຕກກະຈັດ-
ກະຈາຍໄປ ຊາວເອຢິບຈະທ້ອນໂຮມພວກເຂົາຝັງໄວ້ໃນເມືອງ ເມັມຟິດ ກໍຫຍ້າ ແລະພຸ່ມ
ໜາມຈະປົກຫຸ້ມຊັບສົມບັດແລະບ້ານເຮືອນຂອງພວກເຂົາ.
[7]ເມື່ອເວລາແຫ່ງການລົງໂທດໄດ້ມາເຖິງ ເມື່ອນັ້ນປະຊາຊົນຈະໄດ້ສິ່ງທີ່ສົມຄວນຈະໄດ້ຮັບ
ອິສຣາເອນຈະຮູ້ຈັກມັນເມື່ອສິ່ງນັ້ນເກີດຂຶ້ນ ເຈົ້າເວົ້າວ່າ, "ຜູ້ປະກາດພຣະທຳຄົນນີ້ໂງ່ ຄົນທີ່ມີ
ວິນຍານກໍບ້າ" ພວກເຈົ້າກຽດຊັງເຮົາຫລາຍທີ່ສຸດ ກໍເພາະບາບຂອງພວກເຈົ້າມີຫລາຍທີ່ສຸດ.
[8]ພຣະເຈົ້າໄດ້ຊົງເອີ້ນເຮົາມາໃນຖານະເປັນຜູ້ປະກາດພຣະທຳ ເອຟຣາຢິມໄພ່ພົນຂອງພຣະອົງ
ແຕ່ບ່ອນໃດກໍຕາມທີ່ເຮົາໄປ ພວກເຈົ້າກໍຈະພະຍາຍາມດັກຈັບເຮົາເໝືອນດັກຈັບນົກ ໃນແຜ່ນ-
ດິນຂອງພຣະເຈົ້າເອງ ປະຊາຊົນໄດ້ເປັນສັດຕູກັບຜູ້ປະກາດພຣະທຳ. [9]ພວກເຂົາເຮັດຊົ່ວຮ້າຍ
ຢ່າງໝົດຫວັງ ເປັນຢ່າງດຽວກັນກັບເມືອງກີເບອາ ພຣະເຈົ້າຈະຊົງຈົດຈຳບາບ ແລະລົງໂທດ
ພວກເຂົາ.

## ບາບ ແລະຜົນບາບຂອງຊາວອິສຣາເອນ

[10]ພຣະຜູ້ເປັນເຈົ້າຊົງກ່າວວ່າ, "ເມື່ອເຮົາພົບເຫັນອິສຣາເອນທຳອິດ ພວກເຂົາເປັນເໝືອນ
ເຄືອອະງຸ່ນທີ່ກຳລັງງອກຂຶ້ນໃນຖິ່ນແຫ້ງແລ້ງກັນດານ ແລະເມື່ອເຫັນບັນພະບູລຸດທັງຫລາຍ
ຂອງພວກເຈົ້າທຳອິດ ກໍເຫັນພວກເຂົາເປັນເໝືອນໝາກເດື່ອເລີ່ມສຸກທຳອິດໃນລະດູການ ແຕ່
ເມື່ອພວກເຂົາມາເຖິງພູເປໂອນແລ້ວ ກໍເລີ່ມຂາບໄຫວ້ພະບາອານ ເຮົາກຽດຊັງພວກເຂົາເທົ່າ
ກັບທີ່ກຽດຊັງຮູບພະທີ່ພວກເຂົາຮັກ. [11]ຄວາມຍິ່ງໃຫຍ່ຂອງເອຟຣາຢິມ ຈະບິນໜີເໝືອນນົກ
ຈະບໍ່ມີຜູ້ຍິງຖືພາ ແລະບໍ່ມີຜູ້ນາເກີດ. [12]ຖ້າຫາກພວກເຂົາລ້ຽງລູກໄວ້ ເຮົາກໍຈະເອົາໜີເສຍ ຈະ
ບໍ່ປ່ອຍໃຫ້ຜູ້ໃດມີຊີວິດຢູ່ ເມື່ອເຮົາປະຖິ້ມປະຊາຊົນເຫລົ່ານີ້ ສິ່ງທີ່ໜ້າຢ້ານຈະເກີດຂຶ້ນກັບພວກ
ເຂົາ. [13]ບັດນີ້ ເຮົາເຫັນວ່າ ພວກເດັກນ້ອຍຈະຖືກຈັບໄປຂ້າ." [14]ຂ້າແດ່ພຣະຜູ້ເປັນເຈົ້າ ຂ້າ-
ນ້ອຍຈະທູນຂໍໃຫ້ພຣະອົງປະທານສິ່ງໃດນໍແກ່ປະຊາຊົນພວກນີ້ ຂໍພຣະອົງຊົງໂຜດໃຫ້ມົດລູກ
ຂອງພວກເຂົາຕັນ ແລະໃຫ້ຫົວນົມແຫ້ງ.

## ການພິພາກສາໂທດຂອງພຣະຜູ້ເປັນເຈົ້າ ໃນອິສຣາເອນ

[15]ພຣະຜູ້ເປັນເຈົ້າຊົງກ່າວວ່າ, "ການຊົ່ວຮ້າຍທັງປວງຂອງພວກເຂົາໄດ້ເລີ່ມຕົ້ນທີ່ເມືອງກິນ-
ການ ແມ່ນບ່ອນນັ້ນແຫລະ ທີ່ເຮົາເລີ່ມຕົ້ນກຽດຊັງພວກເຂົາ ຍ້ອນວ່າພວກເຂົາເຮັດຊົ່ວ ເຮົາ
ຈະຂັບໄລ່ພວກເຂົາອອກຈາກແຜ່ນດິນຂອງເຮົາ ຈະບໍ່ຮັກແພງພວກເຂົາອີກ ຜູ້ນຳທັງໝົດຂອງ
ພວກເຂົາໄດ້ກະບົດຕໍ່ສູ້ເຮົາ. [16]ປະຊາຊົນເອຟຣາຢິມເປັນເໝືອນຮາກພືດທີ່ຕາຍແລ້ວ ຊຶ່ງຈະບໍ່-
ເກີດໝາກອີກ ພວກເຂົາຈະບໍ່ມີລູກ ແຕ່ຖ້າມີເຮົາກໍຈະຂ້າລູກຮັກນັ້ນຖິ້ມເສຍ."

## ຜູ້ປະກາດພຣະທຳເວົ້າເຖິງອິສຣາເອນ

17ພຣະເຈົ້າອົງທີ່ຂ້າພະເຈົ້າຮັບໃຊ້ ຈະປະຖິ້ມໄພ່ພົນຂອງພຣະອົງ ເພາະວ່າພວກເຂົາບໍ່ເຊື່ອ
ຟັງພຣະອົງ ແລະຈະກາຍເປັນຄົນພະເນຈອນຢູ່ໃນທ່າມກາງຊົນຊາດທັງຫລາຍ.

# ບົດທີ 10

1ປະຊາຊົນ ອິສຣາເອນ ເປັນເໝືອນຕົ້ນອະງຸ່ນທີ່ມີໝາກດົກ ພວກເຂົາຮັ່ງມີຫລາຍຂຶ້ນເທົ່າໃດ
ກໍ່ສ້າງແທ່ນບູຊາຫລາຍຂຶ້ນເທົ່ານັ້ນ ແຜ່ນດິນຂອງພວກເຂົາໄດ້ຜົນດີຂຶ້ນເທົ່າໃດ ກໍ່ສ້າງເສົາສັກ-
ສິດສຳລັບຂາບໄຫວ້ໃຫ້ງາມຂຶ້ນເທົ່ານັ້ນ ໃຈຂອງພວກເຂົາຈຶ່ງເຕັມໄປດ້ວຍການສໍ້ໂກງ. 2ບັດນີ້
ພວກເຂົາຈະຕ້ອງໄດ້ຮັບທຸກຍ້ອນບາບຂອງຕົນ ພຣະເຈົ້າຈະຊົງມ້າງເພແທ່ນບູຊາ ແລະທຳ-
ລາຍເສົາສັກສິດຂອງພວກເຂົາຖິ້ມ.

3ອີກບໍ່ເຫິງ ປະຊາຊົນເຫລົ່ານີ້ຈະເວົ້າວ່າ, “ພວກເຂົາບໍ່ມີກະສັດ ເພາະວ່າພວກເຮົາບໍ່ຢຳເກງ
ພຣະຜູ້ເປັນເຈົ້າ ແຕ່ຖ້າມີກະສັດ ເພິ່ນຈະເຮັດຫຍັງສຳລັບພວກເຮົາໄດ້ແດ່? 4ບໍ່ມີຫຍັງດອກ
ນອກຈາກຄຳເວົ້າ ກັບການໃຫ້ສັນຍາຫຼອກເຫັດ ແລະບໍ່ມີປະໂຫຍດ ຄວາມຍຸດຕິທຳກໍກາຍເປັນ
ອະຍຸດຕິທຳ ຊຶ່ງງອກງາມຂຶ້ນເໝືອນພືດທີ່ມີພິດທົ່ວທັງປະເທດ.”

5ປະຊາຊົນທີ່ອາໄສຢູ່ໃນນະຄອນຊາມາເຣຍ ຈະຢ້ານກົວເປັນທຸກຍ້ອນວ່າສູນເສຍຮູບງົວຄຳ
ທີ່ເມືອງເບັດ-ອາເວນ ພວກເຂົາກັບພວກປະໂລຫິດຜູ້ຮັບໃຊ້ນັ້ນຈະໄວ້ທຸກ ແລະຮ້ອງຄາງ
ຍ້ອນວ່າຮູບນັ້ນສູນເສຍຄຸນນະພາບ. 6ເພາະຄຳທີ່ຫຸ້ມຫໍ່ກໍຖືກລອກອອກ ຮູບນັ້ນຖືກນຳໄປຍັງ
ປະເທດອັດຊີເຣຍ ເພື່ອເປັນເຄື່ອງບັນນາການແກ່ກະສັດອົງຍິ່ງໃຫຍ່ ເອຟຣາຢິມຈະໄດ້ຮັບ
ຄວາມເສື່ອມເສຍ ແລະອິສຣາເອນຈະອັບອາຍຂາຍໜ້າຍ້ອນແຜນການທີ່ພວກເຂົາປະພຶດນັ້ນ.
7ກະສັດຂອງພວກເຂົາຈະດັບສູນໄປ ເໝືອນງ່າໄມ້ທີ່ຖືກນໍ້າພັດໄປ ບ່ອນທີ່ພວກອິສຣາເອນ
ຂາບໄຫວ້ຮູບເຄົາລົບຈະຖືກທຳລາຍຖິ້ມ. 8ໜາມ ແລະຫຍ້າຈະປົ່ງຂຶ້ນມາປົກຫຸ້ມແທ່ນບູຊາຂອງ
ພວກເຂົາ ປະຊາຊົນຈະເວົ້າຕໍ່ພູທັງຫລາຍວ່າ “ຈົ່ງປົດບັງເຮົາໄວ້” ແລະເວົ້າຕໍ່ພູນ້ອຍວ່າ “ຈົ່ງ
ລົ້ມທັບເຮົາເສຍ.”

## ພຣະຜູ້ເປັນເຈົ້າພິພາກສາໂທດອິສຣາເອນ

9ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ປະຊາຊົນ ອິສຣາເອນໄດ້ເຮັດບາບຕໍ່ສູ້ເຮົາຕັ້ງແຕ່ຄາວຢູ່ທີ່
ເມືອງກິເບອາ ດັ່ງນັ້ນ ສົງຄາມຈຶ່ງເກີດຂຶ້ນກັບພວກເຂົາທີ່ກິເບອາ. 10ເຮົາຈະໂຈມຕີ ແລະລົງ-
ໂທດຄົນບາບເຫລົ່ານີ້ ຊົນຊາດທັງຫລາຍຈະຮ່ວມກັນຕໍ່ສູ້ ແລະລົງໂທດພວກເຂົາ ຍ້ອນຄວາມ
ບາບໜາສາໂຫດທີ່ພວກເຂົາໄດ້ກະທຳນັ້ນ.

11ເອຟຣາຢິມເປັນເໝືອນງົວນ້ອຍທີ່ເຝິກແອບດີແລ້ວ ແລະສາມາດຢຽບເຂົ້າໄດ້ດີ ແຕ່ເຮົາໄດ້
ຕົກລົງໃຈເອົາແອກໃສ່ຄໍອັນງົດງາມຂອງມັນ ເພື່ອໃຫ້ມັນເຮັດວຽກໜັກກວ່າເກົ່າ ຄື ໃຫ້ຢູດາດຶງ
ໄຖ ຢາໂຄບດຶງຄາດ. 12ເຮົາເວົ້າວ່າ ຈົ່ງປູກຄວາມຊອບທຳໃຫ້ແກ່ຕົນ ແລ້ວເກັບກ່ຽວເອົາພອນ
ທີ່ໄດ້ຈາກເຈົ້າທີ່ຈົ່ງຮັກພັກດີຕໍ່ເຮົາ ຈົ່ງຂຸດກົ່ນເອົາດິນໃໝ່ ເພາະມັນເຖິງເວລາທີ່ເຈົ້າຈະຄືນໄປ
ຫາເຮົາ ຄື ພຣະຜູ້ເປັນເຈົ້າ ແລ້ວເຮົາຈະມາເທພຣະພອນລົງໃສ່ເຈົ້າ. 13ແຕ່ແທນທີ່ຈະເປັນດັ່ງ-

ນັ້ນ ພວກເຈົ້າກັບປູກຄວາມຊົ່ວແລະເກັບກ່ຽວຜົນຊົ່ວ ພວກເຈົ້າໄດ້ຢູ່ໄດ້ກິນຍ້ອນການຕົວະ
ເພາະວ່າ ພວກເຈົ້າໄວ້ວາງໃຈໃນທາງປະພຶດ ແລະໃນຈຳນວນທະຫານອັນຫລວງຫລາຍຂອງ
ພວກເຈົ້າ. [14]ສົງຄາມຈຶ່ງຈະເກີດຂຶ້ນກັບປະຊາຊົນຂອງເຈົ້າ ປ້ອມທັງໝົດຈະຖືກທຳລາຍ ມັນຈະ
ເປັນຄືກັນກັບມື້ທີ່ກະສັດຊັນມັນຮົບ ແລະທຳລາຍນະຄອນເບັດ-ອາເບນນັ້ນ ຈົນເປັນເຫດໃຫ້
ພວກແມ່ຍິງ ແລະເດັກນ້ອຍຖືກບົດທຳລາຍໃຫ້ຕາຍໝົດ.” [15]ຊາວເບັດເອນເອີຍ ສິ່ງນີ້ແຫລະ
ຈະເກີດຂຶ້ນກັບພວກເຈົ້າ ຍ້ອນຄວາມຊົ່ວອັນຮ້າຍທີ່ພວກເຈົ້າໄດ້ກະທຳ ເມື່ອສົງຄາມເລີ່ມລະ-
ເບີດຂຶ້ນ ກະສັດອິສຣາເອນ ກໍຈະສິ້ນພະຊົນ.”

# ບົດທີ 11

## ຄວາມຮັກຂອງພຣະເຈົ້າທີ່ມີຕໍ່ພວກກະບົດ

[1] “ຄາວອິສຣາເອນຍັງເປັນເດັກນ້ອຍ ເຮົາກໍຮັກແພງພວກເຂົາ
ຕັ້ງແຕ່ຄາວເຮົານຳພວກເຂົາອອກຈາກປະເທດເອຢິບ
ເຮົາໄດ້ເອີ້ນພວກເຂົາວ່າລູກຊາຍຂອງເຮົາ.
[2] ແຕ່ເມື່ອເຮົາຍິ່ງເອີ້ນພວກເຂົາມາຫາເຮົາຫລາຍເທົ່າໃດ
ພວກເຂົາຍິ່ງໜີຫ່າງຈາກເຮົາຫລາຍຂຶ້ນເທົ່ານັ້ນ
ໄພ່ພົນຂອງເຮົາໄດ້ຖວາຍສັດບູຊາແກ່ພະບາອານ
ແລະໄດ້ເຜົາເຄື່ອງຫອມບູຊາແດ່ຮູບເຄົາລົບ.
[3] ເຮົານີ້ແຫລະທີ່ສອນເອຟຣາຢິມໃຫ້ຍ່າງ ແລະອູ້ມພວກເຂົາ
ແຕ່ພວກເຂົາບໍ່ຍອມຮັບຮູ້ວ່າ ເຮົາເປັນຜູ້ລ້ຽງດູພວກເຂົາ.
[4] ເຮົາໄດ້ໃຊ້ຄວາມອ່ອນຫວານ ແລະຄວາມຮັກ
ເປັນເຄື່ອງຊັກຈູງໃຫ້ພວກເຂົາມາຫາເຮົາ
ໄດ້ໂຊມພວກເຂົາລຸກຂຶ້ນແລ້ວກອດແນບໃສ່ແກ້ມ
ແລະໄດ້ຖ່ອມຕົວລົງມາລ້ຽງດູພວກເຂົາ.
[5]ພວກເຂົາຈະບໍ່ກັບຄືນໄປຍັງປະເທດເອຢິບອີກ ແຕ່ວ່າກະສັດອັດຊີເຣຍຈະປົກຄອງພວກ
ເຂົາ ເພາະວ່າພວກເຂົາປະຕິເສດບໍ່ຍອມຄືນໄປຫາເຮົາ. [6]ສົງຄາມຈະທຳລາຍຫົວເມືອງ ແລະ
ບານປະຕູເມືອງຖິ້ມ ມັນຈະລ້າງຜານໄພ່ພົນຂອງເຮົາດ້ວຍ ເພາະວ່າພວກເຂົາໄດ້ເຮັດຕາມ
ແນວທາງຊົ່ວ. [7]ພວກເຂົາໄດ້ໜີຈາກເຮົາໄປ ເພາະສະນັ້ນ ພວກເຂົາຈຶ່ງໜີຈາກຜົນຂອງການ
ກະທຳນັ້ນບໍ່ໄດ້ ພວກເຂົາຈະຮ້ອງໄຫ້ຍ້ອນແອກໃນຄໍ ແລະຈະບໍ່ມີໃຜເອົາອອກໃຫ້ພວກເຂົາ.
[8] ເອຟຣາຢິມເອີຍ ເຮັດແນວໃດເຮົາຈຶ່ງຈະເຊົາກ່ຽວຂ້ອງກັບເຈົ້າໄດ້?
ຈະປະຖິ້ມເຈົ້າໄດ້ດ້ວຍວິທີໃດ?
ຈະທຳລາຍເຈົ້າເໝືອນທີ່ເຮົາທຳລາຍເມືອງອັດມາໄດ້ບໍ?
ຫລືຈະປະຕິບັດຕໍ່ເຈົ້າເໝືອນທີ່ເຮົາໄດ້ປະຕິບັດກັບເມືອງເຊໂບຢິມນັ້ນບໍ?
ເຮົາຈະບໍ່ເຮັດດັ່ງນັ້ນດອກ!

ຈິດໃຈເຮົາແສນກະວົນກະວາຍ ເພາະວ່າສົງສານພວກເຈົ້າ.
9 ຈະບໍ່ລົງໂທດພວກເຈົ້າດ້ວຍຄວາມຄຽດແຄ້ນ
ຈະບໍ່ທຳລາຍ ເອຟຣາຢິມ ອີກ
ເພາະວ່າເຮົາເປັນ ພຣະເຈົ້າບໍ່ແມ່ນມະນຸດ
ເຮົາຄືຜູ້ບໍລິສຸດທີ່ຢູ່ກັບເຈົ້າ
ຈະບໍ່ມາຫາພວກເຈົ້າດ້ວຍຄວາມຄຽດແຄ້ນ.

10ເຮົາຈະຕ້ອງກຳຮາມເໝືອນສິງໃສ່ສັດຕູຂອງພວກເຂົາ ໄພ່ພົນຂອງເຮົາຈະຕິດຕາມເຮົາໄປ
ພວກເຂົາຈະຟ້າວມາຫາເຮົາຈາກທິດຕາເວັນຕົກ ມາຈາກປະເທດ ເອຢິບ ວ່ອງໄວ ເໝືອນນົກ.
11ແລະມາຈາກ ອັດຊີເຣຍ ເໝືອນນົກເຂົາ ເຮົາຈະນຳພວກເຂົາໄປຍັງບ້ານເຮືອນອີກ ເຮົາຄື
ພຣະຜູ້ເປັນເຈົ້າ ໄດ້ເວົ້າດັ່ງນີ້ແຫລະ."

## ອິສຣາເອນ ແລະຢູດາຖືກລົງໂທດ

12ພຣະຜູ້ເປັນເຈົ້າ ຊົງກ່າວວ່າ, "ປະຊາຊົນ ເອຟຣາຢິມ ໄດ້ໃຊ້ການຕົວະ ແລະການຫລອກ
ລວງປິດລ້ອມເຮົາ ແລະຊາວຢູດາກໍ່ຍັງເປັນກະບົດຕໍ່ສູ້ເຮົາຢູ່ ຄືຕໍ່ສູ້ຜູ້ທ່ຽງທຳ ແລະບໍລິສຸດ.

# ບົດທີ 12

1ທຸກໆສິ່ງທີ່ປະຊາຊົນ ເອຟຣາຢິມ ໄດ້ກະທຳຕັ້ງແຕ່ເຊົ້າຈົນຮອດຄ່ຳນັ້ນ ລ້ວນແລ້ວແຕ່ບໍ່ມີ
ປະໂຫຍດ ແລະເສຍຫາຍທັງນັ້ນ ການຕົວະ ແລະການກະທຳທີ່ຮຸນແຮງໄດ້ມີເພີ່ມຂຶ້ນໃນທ່າມ-
ກາງພວກເຂົາ ພວກເຂົາຜູກສຳພັນທະໄມຕີກັບ ອັດຊີເຣຍ ແລະຕິດຕໍ່ຊື້ຂາຍກັບ ເອຢິບ."

2ພຣະຜູ້ເປັນເຈົ້າ ຊົງຟ້ອງຮ້ອງປະຊາຊົນ ຢູດາ ພຣະອົງຊົງລົງໂທດ ອິສຣາເອນ ຍ້ອນການ
ປະພຶດຂອງພວກເຂົານັ້ນ ຈະຊົງຕອບແທນຜົນແຫ່ງການກະທຳຂອງພວກເຂົາ. 3ເມື່ອຄາວຢາ-
ໂຄບ ບັນພະບູລຸດຂອງພວກເຂົາຍັງຢູ່ໃນທ້ອງແມ່ ລາວກໍ່ໄດ້ຫລອກລວງອ້າຍນ້ອງຂອງຕົນ
ເມື່ອລາວໃຫຍ່ແລ້ວ ກໍສູ້ກັບ ພຣະເຈົ້າ ແລະໄດ້ສູ້ກັບທູດຂອງ ພຣະເຈົ້າ ຈົນມີໄຊຊະນະ. 4ຕໍ່ມາ
ລາວໄດ້ຮ້ອງໄຫ້ ແລະທູນຂໍພຣະພອນ ພຣະເຈົ້າ ຈຶ່ງສະເດັດມາຫາຢາໂຄບ ທີ່ ເບັດເອນ ແລະ
ຊົງກ່າວກັບລາວຢູ່ທີ່ນັ້ນ. 5ນີ້ແຫລະ ພຣະຜູ້ເປັນເຈົ້າ ຄື ພຣະເຈົ້າ ແຫ່ງຈັກກະວານຈຶ່ງອອກ
ພຣະນາມຂອງພຣະອົງໃນເວລາຂາບໄຫວ້ນະມັດສະການ.

6ດ້ວຍເຫດນີ້ແຫລະ ພວກເຈົ້າຜູ້ເປັນເຊື້ອສາຍຂອງຢາໂຄບ ຈົ່ງໄວ້ວາງໃຈໃນ ພຣະເຈົ້າ ຂອງ
ເຈົ້າ ແລະກັບຄືນໄປຫາພຣະອົງສາ ໃຫ້ມີຄວາມຈົງຮັກພັກດີມີຄວາມຍຸດຕິທຳ ແລະຄອຍຖ້າ
ພຣະເຈົ້າ ຂອງເຈົ້າດ້ວຍຄວາມອົດທົນ.

## ການພິພາກສາໂທດຄາວຕໍ່ໄປ

7ພຣະຜູ້ເປັນເຈົ້າ ຊົງກ່າວວ່າ, "ປະຊາຊົນ ເອຟຣາຢິມ ໃຈຄົດເໝືອນກັບຊາວ ການາອານ ໃນ
ມືຂອງພວກເຂົາມີຊິງປອມ ແລະມັກສໍ້ໂກງ. 8ແຕ່ພວກເຂົາເວົ້າວ່າ "ພວກເຮົາຮັ່ງມີ ເປັນຄົນ
ໂຊກດີ ແລະບໍ່ມີໃຜສາມາດຟ້ອງພວກເຮົາທີ່ຮັ່ງມີຍ້ອນຄວາມບໍ່ສັດຊື່ໄດ້." 9ເຮົາເປັນ ພຣະຜູ້-
ເປັນເຈົ້າ ຂອງພວກເຈົ້າ ຜູ້ຊຶ່ງນຳພວກເຈົ້າອອກຈາກ ເອຢິບ ເຮົາຈະເຮັດໃຫ້ພວກເຈົ້າອາໄສຢູ່

ໃນຕູບຜ້າເຕັນອີກ ເໝືອນທີ່ເຄີຍຢູ່ຄາວເຮົາມາຫາພວກເຈົ້າໃນຖິ່ນແຫ້ງແລ້ງກັນດານນັ້ນ. [10]ເຮົາ
ໄດ້ເວົ້າກັບພວກຜູ້ປະກາດພຣະທຳ ແລະໄດ້ໃຫ້ພວກເຂົາເຫັນນິມິດຫລາຍຢ່າງ ບັດນີ້ ເຮົາຈະ
ນຳໄພພິບັດຜ່ານມາທາງຜູ້ປະກາດພຣະທຳ. [11]ພວກທີ່ໄຫວ້ຮູບເຄົາລົບໃນກີເລອາດຈະຕາຍ
ງົວທັງຫລາຍຈະຖືກເຜົາບູຊາໃນກິນການ ດັ່ງນັ້ນ ແທ່ນບູຊາທັງຫລາຍຈຶ່ງຈະກາຍເປັນກອງ
ຫີນຢູ່ໃນທົ່ງກວ້າງ.” [12]ຢາໂຄບ ບັນພະບູລຸດຂອງພວກເຮົາຕ້ອງໜີໄປຍັງປະເທດອາຣາມ ຄື
ບ່ອນທີ່ລາວລ້ຽງແກະຂອງຊາຍຄົນໜຶ່ງ ເພື່ອຈະແຕ່ງງານກັບຍິງຄົນໜຶ່ງຢູ່ທີ່ນັ້ນ. [13]ພຣະຜູ້ເປັນ-
ເຈົ້າຊົງໃຊ້ຜູ້ປະກາດພຣະທຳຄົນໜຶ່ງນຳຊາວ ອິສຣາເອນອອກຈາກຄວາມເປັນທາດໃນປະເທດ
ເອຢິບ ຊົງໃຊ້ຜູ້ປະກາດພຣະທຳຄົນໜຶ່ງລ້ຽງດູພວກເຂົາ. [14]ປະຊາຊົນເອຟຣາຢິມໄດ້ເຮັດໃຫ້
ພຣະຜູ້ເປັນເຈົ້າຊົງພຣະພິໂລດຢ່າງຂົມຂື່ນ ພວກເຂົາສົມຄວນຕາຍຍ້ອນການຊົ່ວນັ້ນ ພຣະເຈົ້າ
ຈະບໍ່ຊົງໃຫ້ອະໄພພວກເຂົາ ຈະຊົງລົງໂທດທີ່ພວກເຂົາທີ່ນຳເອົາຄວາມເສື່ອມເສຍມາໃຫ້ພຣະ-
ອົງ.

# ບົດທີ 13

## ການພິພາກສາອິສຣາເອນຄັ້ງສຸດທ້າຍ

[1]ເມື່ອຕະກູນເອຟຣາຢິມເວົ້າ ຄົນອື່ນໆກໍຢ້ານກົວ ຕະກູນອື່ນໆຂອງອິສຣາເອນໄດ້ເຄົາລົບ
ເອຟຣາຢິມ ແຕ່ປະຊາຊົນໄດ້ກາຍເປັນຄົນຜິດຍ້ອນຂາບໄຫວ້ພະບາອານ ພວກເຂົາຈະຕາຍ
ຍ້ອນການກະທຳນີ້. [2]ເພາະວ່າພວກເຂົາຍັງດຳເນີນຢູ່ໃນທາງບາບ ແລະຍັງຫລໍ່ຮູບດ້ວຍໂລຫະ
ຂາບໄຫວ້ ຄື ຫລໍ່ຮູບເງິນໄວ້ບູຊາຕາມຄວາມຄິດຂອງມະນຸດ ຮູບອັນນັ້ນເຮັດດ້ວຍມືຂອງມະນຸດ
ແລ້ວພວກເຂົາກໍເວົ້າວ່າ, “ຈົ່ງຖວາຍເຄື່ອງເຜົາບູຊາແກ່ຮູບເຫລົ່ານີ້.” [3]ມະນຸດຈູບຮູບອັນນັ້ນໄດ້
ບໍ? ມັນເປັນຮູບງົວ ດັ່ງນັ້ນ ປະຊາຊົນເຫລົ່ານີ້ຈຶ່ງຈະດັບສູນໄປເໝືອນນໍ້າໝອກ ແລະນໍ້າຄ້າງ
ໃນຕອນເຊົ້າ ພວກເຂົາຈະເປັນເໝືອນເຂົ້າລີບ ທີ່ລົມພັດມາຈາກລານຟາດເຂົ້າ ແລະເໝືອນ
ຄວັນທີ່ອອກມາຈາກປ່ອງຢ້ຽມ.

[4]ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ເຮົາເປັນພຣະຜູ້ເປັນເຈົ້າຂອງພວກເຈົ້າ ຊຶ່ງໄດ້ນຳພວກເຈົ້າ
ອອກມາຈາກປະເທດເອຢິບ ໃນເວລານັ້ນ ພວກເຈົ້າບໍ່ຮູ້ຈັກພຣະເຈົ້າອົງໃດນອກຈາກເຮົາ ເຮົາ
ເປັນພຣະຜູ້ຊ່ອຍໃຫ້ພົ້ນອົງດຽວຂອງພວກເຈົ້າ. [5]ໄດ້ລ້ຽງດູພວກເຈົ້າໃນປະເທດແຫ້ງແລ້ງ ແລະ
ຖິ່ນກັນດານ. [6]ແຕ່ເມື່ອພວກເຈົ້າໄດ້ເຂົ້າໄປຢູ່ໃນດິນດີ ໄດ້ກິນອີ່ມບໍລິບູນແລ້ວ ພວກເຈົ້າກໍກາຍ-
ເປັນຄົນໂອ້ອວດຈອງຫອງ ແລະລືມເຮົາ. [7]ດ້ວຍເຫດນັ້ນ ເຮົາຈຶ່ງຈະໂດດກັດພວກເຈົ້າເໝືອນ
ດັ່ງສິງ ເຮົາຈະນອນຄອຍຢູ່ຕາມທາງທຽວຂອງເຈົ້າເໝືອນເສືອດາວ. [8]ຈະຄຸບພວກເຈົ້າເໝືອນໝີ
ທີ່ສູນເສຍລູກຂອງມັນ ຈະຈີກກິນພວກເຈົ້າທັນທີເໝືອນສິງ ແລະຈະຈີກພວກເຈົ້າອອກເປັນ
ຕ່ອນໆ ເໝືອນສັດປ່າຈີກ.

[9]ປະຊາຊົນອິສຣາເອນເອີຍ ເຮົາຈະທຳລາຍພວກເຈົ້າແລ້ວແມ່ນໃຜຈະຊ່ອຍພວກເຈົ້າໄດ້?
[10]ພວກເຈົ້າໄດ້ຮ້ອງຂໍເອົາກະສັດ ແລະພວກຜູ້ນຳ ແຕ່ພວກເຂົາຈະຊ່ອຍພວກເຈົ້າໄດ້ຢ່າງໃດ?
[11]ເຮົາໄດ້ໃຫ້ພວກເຈົ້າມີກະສັດ ແລະເອົາໜີໄປເສຍ ກໍຍ້ອນຄວາມໂກດຮ້າຍຢ່າງຮຸນແຮງຂອງ

ເຮົາ.

[12]ບາບ ແລະຄວາມຜິດຂອງ ເອຟຣາຢິມ ໄດ້ບັນທຶກໄວ້ແລ້ວ ການບັນທຶກນີ້ໄດ້ເກັບໄວ້ຢ່າງດີ.
[13]ອິສຣາເອນ ມີໂອກາດທີ່ຈະ ມີຊີວິດລອດຢູ່ໄດ້ ແຕ່ກໍປະຖິ້ມໂອກາດນັ້ນ ເພາະໂງ່ເກີນໄປ
ເໝືອນດັ່ງແອນ້ອຍທີ່ກຳລັງຈະອອກມາຈາກທ້ອງແມ່ ແຕ່ບໍ່ໄດ້ອອກມາ ແອນ້ອຍນັ້ນກໍຈະຕ້ອງ
ຕາຍໄປ. [14]ເຮົາຈະບໍ່ຊ່ອຍປະຊາຊົນນີ້ໃຫ້ພົ້ນຈາກພິພົບຄົນຕາຍ ຫລືຊ່ອຍພວກເຂົາໃຫ້ພົ້ນຈາກ
ອຳນາດຂອງຄວາມຕາຍ ໂອ ຄວາມຕາຍເອີຍ ຈົ່ງມາພ້ອມກັບໄພພິບັດຂອງເຈົ້າ ໂອພິພົບຄົນ
ຕາຍເອີຍ ຈົ່ງມາພ້ອມກັບການທຳລາຍຂອງເຈົ້າ ເຮົາບໍ່ສົງສານປະຊາຊົນນີ້. [15]ເຖິງແມ່ນວ່າອິ-
ສຣາເອນອຸດົມສົມບູນຂຶ້ນເໝືອນດັ່ງຫຍ້າ ເຮົາກໍຈະສົ່ງລົມຮ້ອນຈາກແສງຕາເວັນອອກ ພັດມາ
ຈາກຖິ່ນແຫ້ງແລ້ງກັນດານ ລົມນີ້ຈະເຮັດໃຫ້ນ້ຳສ້າງ ແລະນ້ຳພຸຂອງພວກເຂົາແຫ້ງແລ້ງ ມັນ
ຈະພັດເອົາເຄື່ອງມີຄ່າທຸກໆຢ່າງໄປ ອິສຣາເອນຕ້ອງຮັບໂທດຍ້ອນຄວາມຜິດຂອງຕົນ. [16]ເພາະ
ມັນເປັນກະບົດຕໍ່ສູ້ພຣະເຈົ້າ ພົນລະເມືອງຂອງມັນຈະຕາຍໃນສົງຄາມ ພວກເດັກນ້ອຍຈະຖືກ
ໂຍນລົງດິນ ແລະພວກແມ່ມານກໍຈະຖືກຂ້າດ້ວຍການຕັດທ້ອງ.”

# ບົດທີ 14

## ໂຮເຊອາຂໍຮ້ອງອິສຣາເອນ

[1]ປະຊາຊົນ ອິສຣາເອນ ເອີຍ ຈົ່ງກັບຄືນມາຫາພຣະຜູ້ເປັນເຈົ້າຂອງເຈົ້າ ບາບຂອງພວກເຈົ້າ
ໄດ້ເຮັດໃຫ້ພວກເຈົ້າຕຳສະດຸດລົ້ມລົງ. [2]ໃຫ້ກັບຄືນມາຫາພຣະຜູ້ເປັນເຈົ້າສາ ແລະໃຫ້ອ້ອນ-
ວອນຕໍ່ພຣະອົງດັ່ງນີ້, “ໂຜດໃຫ້ອະໄພບາບທັງປວງຂອງພວກຂ້ານ້ອຍແດ່ທ້ອນ ຂໍຊົງຮັບເອົາ
ຄຳອ້ອນວອນຂອງພວກຂ້ານ້ອຍທ້ອນ ແທນທີ່ພວກຂ້ານ້ອຍຈະຖວາຍບູຊາແດ່ພຣະອົງ ພວກ
ຂ້ານ້ອຍຈະສັນລະເສີນພຣະອົງຕາມທີ່ໄດ້ສັນຍາໄວ້. [3]ອັດຊີເຣຍບໍ່ເຄີຍຊ່ອຍພວກຂ້ານ້ອຍເລີຍ
ລົດຮົບກໍໃຫ້ຄວາມຄຸ້ມຄອງພວກຂ້ານ້ອຍບໍ່ໄດ້ ພວກຂ້ານ້ອຍຈະບໍ່ກ່າວຕໍ່ຮູບເຄົາລົບຂອງພວກ
ຂ້ານ້ອຍອີກວ່າ, “ພະອົງເປັນພະຂອງພວກຂ້ານ້ອຍ” ພວກຂ້ານ້ອຍຂໍສາລະພາບວ່າ ພວກຂ້າ-
ນ້ອຍເປັນເໝືອນລູກກຳພ້າ ແຕ່ພຣະອົງຊົງເມດຕາຊ່ອຍເຫລືອພວກຂ້ານ້ອຍ.

## ພຣະຜູ້ເປັນເຈົ້າຊົງສັນຍາວ່າ ຈະໃຫ້ອິສຣາເອນມີຊີວິດໃໝ່

[4] ເຮົາຈະນຳໄພ່ພົນຂອງເຮົາຄືນມາຫາເຮົາ
ຈະຮັກພວກເຂົາດ້ວຍສຸດຈິດສຸດໃຈ
ເພາະວ່າເຮົາເຊົາຮ້າຍພວກເຂົາແລ້ວ.
[5] ເຮົາຈະເປັນຄືຝົນທີ່ຕົກລົງມາຍັງດິນແຫ້ງ
ຕໍ່ປະຊາຊົນ ອິສຣາເອນ
ພວກເຂົາຈະເບີກບານເໝືອນດອກໄມ້
ແລະຮາກຈະຢັ່ງລົງຢ່າງໝັ້ນຄົງ
ເໝືອນດັ່ງຕົ້ນໄມ້ໃນປະເທດ ເລບານອນ.
[6] ພວກເຂົາຈະມີຊີວິດຢູ່ໃນຄວາມຈະເລີນໃໝ່

ຈະຈີບງາມເໝືອນຕົ້ນໝາກກອກເທດ
ຈະມີກິ່ນຫອມເໝືອນຕົ້ນສົນໃນປະເທດ ເລບານອນ.
7 ຈະມີຊີວິດຢູ່ພາຍໃຕ້ການຄຸ້ມຄອງຂອງເຮົາອີກເທື່ອໜຶ່ງ
ຈະອຸດົມສົມບູນເໝືອນສວນອຸດທະຍານ
ຈະມີໝາກຫລາຍເໝືອນຕົ້ນອະງຸ່ນ
ແລະມີຊື່ສຽງເໝືອນເຫລົ້າອະງຸ່ນຂອງປະເທດ ເລບານອນ.
8 ປະຊາຊົນ ເອຟຣາຢິມ ຈະບໍ່ກ່ຽວຂ້ອງກັບຮູບເຄົາລົບອີກ
ເຮົາຈະຕອບສະໜອງຄຳອ້ອນວອນຂອງພວກເຂົາ
ຈະດູແລຮັກສາພວກເຂົາ
ຈະເປັນທີ່ກຳບັງແດດໃຫ້ພວກເຂົາເໝືອນຕົ້ນໄມ້ທີ່ມີໃບຂຽວສົດ
ເຮົາເປັນບໍ່ເກີດແຫ່ງພອນທັງຫລາຍຂອງພວກເຂົາ.

## ຂໍ້ຄວາມສຸດທ້າຍ

9ຂໍໃຫ້ຜູ້ສະຫລາດທັງຫລາຍເຂົ້າໃຈສິ່ງທີ່ຂຽນໄວ້ນີ້ ໃຫ້ນຳເຂົ້າເຖິງໃຈ ທາງຂອງ ພຣະຜູ້-ເປັນເຈົ້າ ນັ້ນຖືກຕ້ອງ ຜູ້ຊອບທຳທັງຫລາຍຍອມດຳເນີນຊີວິດຢູ່ຕາມທາງນີ້ ສ່ວນຄົນບາບທັງ-ຫລາຍຈະຕຳສະດຸດລົ້ມ ຍ້ອນວ່າພວກເຂົາບໍ່ເຮັດຕາມທາງນີ້.

* * *

# ໂຢເອນ

## ບົດທີ 1

### ສຽງຮ້ອງໄຫ້ເນື່ອງຈາກຜົນລະປູກຖືກທຳລາຍ

1ພຣະຄຳຂອງ ພຣະຜູ້ເປັນເຈົ້າທີ່ຊົງກ່າວຕໍ່ ໂຢເອນ ລູກຊາຍຂອງ ເປທູເອນ ມີດັ່ງນີ້:
2 ພວກຜູ້ເຖົ້າແກ່ທັງຫລາຍ ແລະທຸກໆຄົນໃນແຜ່ນດິນ ຢູດາ ຈົ່ງຟັງທ້ອນ
ສິ່ງເຫລົ່ານີ້ເຄີຍເກີດຂຶ້ນໃນແຜ່ນດິນຂອງພວກເຈົ້າ
ຫລືໃນສະໄໝບັນພະບູລຸດຂອງພວກເຈົ້າບໍ?
3 ຈົ່ງເລົ່າເລື່ອງຕໍ່ໄປນີ້ໃຫ້ລູກຂອງພວກເຈົ້າຮູ້
ເພື່ອພວກເຂົາຈະບອກລູກຂອງພວກເຂົາ
ແລະລູກຂອງພວກເຂົາກໍຈະເລົ່າຕໍ່ໄປໃນພາຍໜ້າ.
4 ພືດຜົນທີ່ເຫລືອຈາກຕັກແຕນກິນ
ພວກແມງໄມ້ທັງຫລາຍກໍກິນຊໍ້າ.
5 ພວກຂີ້ເຫລົ້າເອີຍ ຈົ່ງຕື່ນຂຶ້ນຮ້ອງໄຫ້
ນັກດື່ມເຫລົ້າອະງຸ່ນເອີຍ ຈົ່ງຮ້ອງຄາງສາ
ເພາະວ່າໝາກອະງຸ່ນສຳລັບເຮັດເຫລົ້າຖືກທຳລາຍໝົດແລ້ວ.
6 ດ້ວຍວ່າກອງທັບຕັກແຕນໄດ້ໂຈມຕີແຜ່ນດິນຂອງເຮົາ
ພວກມັນມີກຳລັງຫລາຍ ແລະນັບຈຳນວນບໍ່ໄດ້
ແຂ້ວຂອງມັນກໍແຫລມຄົມເໝືອນແຂ້ວສິງ.
7 ມັນໄດ້ທຳລາຍຕົ້ນອະງຸ່ນ ແລະຕົ້ນເດື່ອຂອງເຮົາ
ໄດ້ກັດກິນກາບໝົດ
ຈົນກິ່ງກ້ານເປັນສີຂາວຫລ້ອນ.
8 ປະຊາຊົນເອີຍ ຈົ່ງຮ້ອງໄຫ້ເໝືອນຍິງສາວຮ້ອງໄຫ້
ນຳການຕາຍຂອງຜູ້ຈະເປັນຜົວ.
9 ພວກປະໂລຫິດຜູ້ຖວາຍບູຊາແດ່ ພຣະຜູ້ເປັນເຈົ້າ ຈົ່ງໂສກເສົ້າທ້ອນ
ເພາະວ່າໃນພຣະວິຫານ ບໍ່ມີເຂົ້າ ຫລືເຫລົ້າອະງຸ່ນຖວາຍເລີຍ
10 ທົ່ງນາກໍແປນເປົ່າ.
ແຜ່ນດິນກໍງຽບເຫງົາ
ເພາະວ່າເຂົ້າຖືກທຳລາຍ
ຕົ້ນອະງຸ່ນ ແລະຕົ້ນໝາກກອກເທດກໍຫ່ຽວແຫ້ງ.
11 ຊາວນາທັງຫລາຍເອີຍ ຈົ່ງໂສກເສົ້າທ້ອນ
ຜູ້ເຝົ້າສວນອະງຸ່ນເອີຍ ຈົ່ງຮ້ອງໄຫ້ສາ

ເພາະວ່າເຂົ້າບາເລ ເຂົ້າເດືອຍ
    ແລະພືດຜົນທັງປວງຖືກທຳລາຍໝົດກ້ຽງ.
12 ຕົ້ນອະງຸ່ນກໍຫ່ຽວຕາຍ
    ຕົ້ນເດື່ອກໍຮ່ວງໂຮຍ
ຕົ້ນພິລາ ຕົ້ນຕານ ຕົ້ນໝາກໂປມ
    ແລະຕົ້ນໄມ້ທັງປວງໄດ້ຫ່ຽວແຫ້ງຕາຍໄປ
ຄວາມມ່ວນຊື່ນຂອງຄົນທັງຫລາຍກໍສູນຫາຍໄປດ້ວຍ.
13 ປະໂລຫິດຜູ້ຖວາຍບູຊາ ແລະຮັບໃຊ້ເທິງແທ່ນບູຊາຂອງ ພຣະຜູ້ເປັນເຈົ້າ ເອີຍ
    ຈົ່ງນຸ່ງເຄື່ອງໄວ້ທຸກເຂົ້າໄປຮ້ອງໄຫ້ໃນພຣະວິຫານຕະຫລອດຄືນ
ໃນພຣະວິຫານແຫ່ງ ພຣະເຈົ້າ ຂອງເຈົ້າ
    ບໍ່ມີເຂົ້າ ແລະເຫລົ້າອະງຸ່ນຖວາຍເລີຍ.
14 ຈົ່ງຈັດແຈງພິທີອົດອາຫານ
    ໃຫ້ເອີ້ນກັນມາຊຸມນຸມເພື່ອຂາບໄຫວ້ ພຣະເຈົ້າ
ຈົ່ງເຕົ້າໂຮມບັນດາຜູ້ນຳ ແລະຊາວຢູດາທັງປວງ
    ເຂົ້າໄປຍັງພຣະວິຫານແຫ່ງ ພຣະຜູ້ເປັນເຈົ້າ ຂອງເຈົ້າ
ແລ້ວຮ້ອງຂໍຕໍ່ພຣະອົງທ້ອນ.
15 ວັນຂອງ ພຣະຜູ້ເປັນເຈົ້າ ໃກ້ເຂົ້າມາແລ້ວ
    ຜູ້ຊົງລິດທານຸພາບຈະມາທຳລາຍໃນວັນນັ້ນ
ຈະເປັນວັນໂຫດຮ້າຍທີ່ສຸດ.
16 ພືດຜົນກໍຖືກທຳລາຍໄປຕໍ່ໜ້າຕໍ່ຕາພວກເຮົາ
    ຄວາມມ່ວນຊື່ນບໍ່ມີເລີຍໃນພຣະວິຫານແຫ່ງ ພຣະເຈົ້າ ຂອງພວກເຈົ້າ.
17 ເມັດພືດກໍແຫ້ງຕາຍຢູ່ໃນດິນແກ່ນ
    ໃນສາງບໍ່ມີເຂົ້າເລີຍ
ເລົ້າເຂົ້າເປົ່າ ກໍຖືກທຳລາຍເສຍຫາຍໝົດ.
18 ຝູງແກະກໍຫິວໂຫຍ ແລະງົວຄວາຍກໍຮ້ອງຄາງ
    ຝູງສັດລ້ຽງກໍສັບສົນວຸ້ນວາຍ
ເພາະວ່າບໍ່ມີຫຍ້າຈະກິນ
    ຝູງແກະກໍເປັນທຸກດ້ວຍ.
19 ຂ້າແດ່ ພຣະຜູ້ເປັນເຈົ້າ ຂ້ານ້ອຍຮ້ອງທູນພຣະອົງ
    ເພາະວ່າທົ່ງຫຍ້າ ແລະຕົ້ນໄມ້ໄດ້ຫ່ຽວແຫ້ງຕາຍໄປ
ເປັນເໝືອນກັບວ່າໄຟໄດ້ເຜົາຜານພວກມັນ.
20 ແມ່ນແຕ່ສັດປ່າກໍຮ້ອງທູນພຣະອົງດ້ວຍ
    ເພາະວ່ານ້ຳໃນຫ້ວຍໄດ້ແຫ້ງໝົດໄປ

ແລະຫຍ້າໃນທົ່ງນາກໍຖືກໄຟໄໝ້ໝົດ.

# ບົດທີ 2

## ຕັກແຕນເປັນໝາຍສຳຄັນ ທີ່ບອກໃຫ້ຮູ້ວັນຂອງພຣະຜູ້ເປັນເຈົ້າ

1 ຈົ່ງເປົ່າແກປຸກຢູ່ພູຊີໂອນ ເທິງຈອມພູສັກສິດຂອງ ພຣະເຈົ້າ
ຊາວຢູດາທັງປວງຈະຢ້ານຕົວສັ່ນ
ເພາະວ່າວັນຂອງ ພຣະຜູ້ເປັນເຈົ້າກຳລັງມາໃກ້ແລ້ວ.
2 ວັນນັ້ນຈະມືດ ແລະເປັນທຸກ
ຈະມີເມກໜາ ແລະດຳມືດ
ຕັກແຕນໄດ້ບຸກໄປຂ້າງໜ້າເໝືອນກອງທັບໃຫຍ່
ເໝືອນແສງຕາເວັນໃນຕອນເຊົ້າສ່ອງແສງໄປຕາມພູ
ບໍ່ເຄີຍມີສິ່ງໃດເໝືອນສິ່ງນີ້ມາກ່ອນ
ແລະຈະບໍ່ມີຢ່າງນີ້ອີກຈັກເທື່ອ.
3 ມັນກິນເຄື່ອງປູກຈີນກ້ຽງເໝືອນໄຟເຜົາຜານ
ແຜ່ນດິນເບື້ອງໜ້າຂອງມັນເປັນເໝືອນສວນ ເອເດັນ
ແຕ່ເບື້ອງຫລັງເປັນດິນເປົ່າແປນ
ບໍ່ມີຫຍັງໜີພົ້ນມັນໄປໄດ້.
4 ຮູບຮ່າງຂອງມັນເໝືອນມ້າ
ມັນແລ່ນເໝືອນມ້າຮົບແລ່ນ.
5 ເມື່ອມັນໂດດເຕັ້ນຢູ່ເທິງຈອມພູ
ມີສຽງດັງເໝືອນສຽງລົດຮົບ ຫລືເໝືອນສຽງໄຟໄໝ້ຕໍເຟືອງໃນທົ່ງນາ
ມັນມາເປັນແຖວເໝືອນກອງທັບໃຫຍ່ຕຽມເຂົ້າສະໜາມຮົບ.
6 ທຸກໆຄົນຢ້ານກົວໜ້າຊີດເມື່ອມັນມາໃກ້.
7 ພວກມັນບຸກໂຈມຕີເໝືອນນັກຮົບ
ປີນກຳແພງເໝືອນທະຫານ
ຕ່າງກໍຍ່າງໄປເປັນຖັນແຖວ.
8 ຫລືບໍ່ກີດກັນທາງຍ່າງຊຶ່ງກັນ ແລະກັນ
ມັນບຸກຜ່ານແນວປ້ອງກັນ ໂດຍບໍ່ມີການຢຸດຢັ້ງ.
9 ມັນໂດດເຂົ້າໄປໂຈມຕີເມືອງ
ແລ່ນຢູ່ເທິງກຳແພງ
ປີນຂຶ້ນໄປເຮືອນຊານທັງຫລາຍ
ແລະລອດປ່ອງຢ້ຽມເຂົ້າໄປເໝືອນຂະໂມຍ.

10 ແຜ່ນດິນ ແລະທ້ອງຟ້າສະທ້ານຫວັ່ນໄຫວຍ້ອນມັນ
ດວງຕາເວັນ ແລະດວງເດືອນກໍມືດ
ດວງດາວທັງຫລາຍບໍ່ສ່ອງແສງອີກຕໍ່ໄປ.
11 ພຣະຜູ້ເປັນເຈົ້າຊົງບັນຊາກອງທັບທີ່ເຊື່ອຟັງຂອງພຣະອົງ
ກອງທັບນີ້ມີລິດເດດ ແລະມີຈຳນວນຫລາຍ
ວັນອັນຍິ່ງໃຫຍ່ຂອງ ພຣະຜູ້ເປັນເຈົ້າໜ້າຢ້ານກົວຢ່າງນີ້ແຫລະ
ແມ່ນຜູ້ໃດນໍຈະທົນໄດ້.

## ພຣະເຈົ້າຊົງເອີ້ນໃຫ້ປ່ຽນໃຈໃໝ່

12 ພຣະຜູ້ເປັນເຈົ້າຊົງກ່າວວ່າ, "ເຖິງປານນັ້ນກໍດີ
ຈົ່ງກັບໃຈໃໝ່ດ້ວຍຄວາມເຕັມໃຈ ໃຫ້ກັບມາຫາເຮົາ
ແລ້ວອົດອາຫານ ຮ້ອງໄຫ້ ແລະຮ້ອງຄໍ່າຄວນ.
13 ຢ່າສະແດງຄວາມເສຍໃຈດ້ວຍການຈີກເສື້ອຜ້າຂອງຕົນ
ແຕ່ຄວນໃຫ້ມີໃຈອຸກອັ່ງແທ້"
ຈົ່ງກັບມາຫາ ພຣະຜູ້ເປັນເຈົ້າຂອງເຈົ້າ
ພຣະອົງຊົງເຕັມໄປດ້ວຍຄວາມເມດຕາກະລຸນາ
ຊົງອົດທົນ ແລະປະຕິບັດຕາມຄຳໝັ້ນສັນຍາຂອງພຣະອົງ
ຊົງພ້ອມສະເໝີທີ່ຈະໃຫ້ອະໄພບາບ ແລະຍົກໂທດ.
14 ບາງທີພຣະຜູ້ເປັນເຈົ້າຂອງເຮົາອາດຈະຊົງປ່ຽນພຣະໄທ
ແລະຊົງອວຍພອນໃຫ້ເຮົາມີເຂົ້າປາອາຫານກິນຢ່າງສົມບູນ
ແລ້ວເຮົາກໍຈະໄດ້ຖວາຍບູຊາເຂົ້າປາອາຫານ ແລະເຫລົ້າອະງຸ່ນແດ່ພຣະອົງ.
15 ຈົ່ງເປົ່າແກເທິງພູຊີໂອນ
ເພື່ອຕຽມຕົວອົດອາຫານແລະເອີ້ນຊຸມນຸມຂາບໄຫວ້ ພຣະເຈົ້າ.
16 ຈົ່ງເຕົ້າໂຮມບັນດາປະຊາຊົນ
ໃຫ້ຈັດເອົາພວກເຂົາເຂົ້າຮ່ວມການປະຊຸມອັນບໍລິສຸດ
ຈົ່ງນຳພວກເຖົ້າແກ່ມາ
ໃຫ້ເຕົ້າໂຮມພວກເດັກນ້ອຍ ແລະເດັກອ່ອນດ້ວຍ
ແມ່ນແຕ່ຜູ້ແຕ່ງງານໃໝ່ກໍຕ້ອງໃຫ້ອອກມາຈາກຫ້ອງນອນກ່ອນ.
17 ພວກປະໂລຫິດຜູ້ຮັບໃຊ້ ພຣະຜູ້ເປັນເຈົ້າ
ຢູ່ໃນພຣະວິຫານລະຫວ່າງປະຕູ ແລະແທ່ນບູຊາ
ຕ້ອງຮ້ອງໄຫ້ແລະອ້ອນວອນວ່າ,
"ຂ້າແດ່ ພຣະຜູ້ເປັນເຈົ້າຈົ່ງສົງສານໄພ່ພົນຂອງພຣະອົງແດ່ທ້ອນ
ຂໍຢ່າໃຫ້ຊົນຊາດອື່ນໝິ່ນປະໝາດພວກຂ້ານ້ອຍ
ແລະເວົ້າເຍາະເຍີ້ຍພວກຂ້ານ້ອຍວ່າ

ພຣະເຈົ້າຂອງເຈົ້າຢູ່ໃສ?”

## ພຣະເຈົ້າຊົງໂຜດໃຫ້ແຜ່ນດິນອຸດົມສົມບູນຄືເກົ່າ

18 ແລ້ວ ພຣະຜູ້ເປັນເຈົ້າ ຊົງສະແດງຄວາມເປັນຫ່ວງ ແຜ່ນດິນຂອງພຣະອົງ ແລະຊົງສົງສານ
ໄພ່ພົນຂອງພຣະອົງ. 19 ພຣະອົງຊົງຕອບພວກເຂົາວ່າ,

“ບັດນີ້ ເຮົາຈະໃຫ້ພວກເຈົ້າມີເຂົ້າກິນ
 ມີເຫລົ້າອະງຸ່ນ ແລະນໍ້າມັນ ພວກເຈົ້າຈະໄດ້ອີ່ມໜຳສຳລານ
ຊົນຊາດອື່ນຈະບໍ່ໝິ່ນປະໝາດພວກເຈົ້າອີກຕໍ່ໄປ.
20 ເຮົາຈະຂັບໄລ່ພວກທີ່ມາຈາກທາງເໜືອອອກໄປຈາກເຈົ້າ
 ຈະຂັບໄລ່ພວກເຂົາບາງຄົນໄປຍັງຖິ່ນແຫ້ງແລ້ງກັນດານ
ຂະບວນໜ້າຈະຕົກໄປທະເລ ເມດີແຕຣາເນ
 ຊາກສົບຂອງພວກເຂົາຈະເນົ່າເໝັນ
ເຮົາເຮັດດັ່ງນີ້ກໍເພາະພວກເຂົາໄດ້ເຮັດໃຫ້ແກ່ເຈົ້າ.
21 ໂອແຜ່ນດິນເອີຍ ຢ່າຢ້ານເລີຍ
 ຈົ່ງມ່ວນຊື່ນ ແລະຍິນດີສາ
ເພາະວ່າ ພຣະຜູ້ເປັນເຈົ້າ ໄດ້ຊົງກະທຳການຍິ່ງໃຫຍ່
 ສຳລັບພວກເຈົ້າແລ້ວ.
22 ສັດທັງຫລາຍເອີຍ ຢ່າຢ້ານເລີຍ
 ເພາະວ່າຫຍ້າກໍຂຽວສົດແລ້ວ
ຕົ້ນໄມ້ກໍເກີດໝາກ
 ຕົ້ນເດື່ອ ແລະຕົ້ນອະງຸ່ນກໍມີບໍລິບູນ.
23 ຊາວຊີໂອນ ເອີຍ ຈົ່ງຍິນດີໃນ ພຣະຜູ້ເປັນເຈົ້າ ຂອງເຈົ້າ
 ພຣະອົງຊົງ ໂຜດເທຝົນລົງມາໃຫ້ພວກເຈົ້າຖືກຕ້ອງຕາມລະດູການ
ຄືຝົນຕົ້ນລະດູ ແລະປາຍລະດູເໝືອນຢ່າງແຕ່ກ່ອນ.
24 ໃນເດີ່ນຈະມີເຂົ້າເຕັມບໍລິບູນ
 ອ່າງຢູ່ຂ້າງເຄື່ອງບີບຈະເຕັມລົ້ນດ້ວຍນໍ້າອະງຸ່ນ ແລະນໍ້າມັນ.
25 ສິ່ງທີ່ເຈົ້າສູນເສຍໃນປີທີ່ຕັກແຕນກິນເຄື່ອງປູກຂອງເຈົ້ານັ້ນ
 ເຮົາຈະທົດແທນໃຫ້
ແມ່ນເຮົາເອງທີ່ສົ່ງກອງທັບຕັກແຕນນີ້ມາທຳລາຍເຈົ້າ.
26 ບັດນີ້ ພວກເຈົ້າຈະມີອາຫານກິນອີ່ມໜຳສຳລານ
 ເຈົ້າຈົ່ງສັນລະເສີນ ພຣະຜູ້ເປັນເຈົ້າ ຂອງເຈົ້າ
ຜູ້ຊົງເຮັດການອັດສະຈັນສຳລັບພວກເຈົ້າ
 ໄພ່ພົນຂອງເຮົາຈະບໍ່ຖືກໝິ່ນປະໝາດອີກ.
27 ອິສຣາເອນ ເອີຍ ແລ້ວພວກເຈົ້າຈະຮູ້ວ່າເຮົາຢູ່ທ່າມກາງພວກເຈົ້າ

ແລະຮູ້ວ່າເຮົາຄື ພຣະຜູ້ເປັນເຈົ້າ ຂອງພວກເຈົ້າ
ບໍ່ມີພຣະເຈົ້າ ອື່ນອີກນອກຈາກເຮົາ
ໄພ່ພົນຂອງເຮົາຈະບໍ່ຖືກໝິ່ນປະໝາດອີກ.

## ພຣະເຈົ້າຊົງປະທານພຣະວິນຍານ

28 ຫລັງຈາກນັ້ນ ເຮົາຈະໃຫ້ຄົນທັງປວງໄດ້ຮັບ ພຣະວິນຍານ ຂອງເຮົາ
ລູກຊາຍຍິງຂອງພວກເຈົ້າຈະປະກາດພຣະຄຳຂອງເຮົາ
ພວກຄົນເຖົ້າກໍຈະຝັນ
ແລະພວກຄົນໜຸ່ມກໍຈະເຫັນນິມິດ.
29 ໃນເວລານັ້ນ ຄົນໃຊ້ຊາຍຍິງທັງຫລາຍ
ຈະໄດ້ຮັບ ພຣະວິນຍານ ຂອງເຮົາ.

## ຄຳຕັກເຕືອນກ່ຽວກັບວັນຂອງພຣະຜູ້ເປັນເຈົ້າ

30-31 ກ່ອນວັນອັນຍິ່ງໃຫຍ່ ແລະໜ້າຢ້ານຂອງ ພຣະຜູ້ເປັນເຈົ້າ ມາເຖິງ
ເຮົາຈະເຮັດການອັດສະຈັນໃນທ້ອງຟ້າ ແລະແຜ່ນດິນ
ຄືຈະມີເລືອດມີໄຟ ແລະຄວັນເມກ
ດວງຕາເວັນຈະດຳມືດ
ດວງເດືອນຈະກາຍເປັນສີແດງເໝືອນເລືອດ.
32 ແຕ່ຄົນທັງປວງທີ່ຮ້ອງຂໍຄວາມຊ່ອຍເຫລືອຈາກ ພຣະຜູ້ເປັນເຈົ້າ ຈະປອດໄພ
ດັ່ງທີ່ ພຣະຜູ້ເປັນເຈົ້າ ໄດ້ຊົງກ່າວວ່າ:
“ຈະມີຜູ້ພົ້ນໄດ້ເທິງພູຊີໂອນ ແລະໃນກຸງ ເຢຣູຊາເລັມ
ຄົນເຫລົ່ານີ້ທີ່ ພຣະຜູ້ເປັນເຈົ້າ ຊົງເລືອກຈະລອດພົ້ນໄດ້.”

# ບົດທີ 3

## ການຕັດສິນຊົນຊາດທັງຫລາຍ

1 ໃນເວລານັ້ນ ເຮົາຈະເຮັດໃຫ້ຊົນຊາດຢູດາ
ແລະ ເຢຣູຊາເລັມ ອຸດົມສົມບູນ.
2 ເຮົາຈະເຕົ້າໂຮມຊົນຊາດທັງປວງ
ແລະນຳພວກເຂົາໄປຍັງຮ່ອມພູເຢໂຮຊາຟັດ
ເພື່ອພິພາກສາພວກເຂົາໃນບ່ອນນັ້ນ
ເພາະວ່າພວກເຂົາທັງປວງໄດ້ເຮັດຕໍ່ໄພ່ພົນຂອງເຮົາ
ພວກເຂົາໄດ້ເຮັດໃຫ້ຊາວ ອິສຣາເອນ ກະຈັດກະຈາຍໄປໃນຕ່າງປະເທດ
ແລະໄດ້ແບ່ງແຜ່ນດິນ ອິສຣາເອນ ຂອງເຮົາ.
3 ພວກເຂົາໄດ້ຈົກສະຫລາກເອົາພວກຊະເລີຍໄປຂາຍ
ແລະຂາຍເດັກຊາຍຍິງໄປເປັນທາດ

ເພື່ອເອົາເງິນມາກິນເຫລົ້າ ແລະຫລິ້ນສາວ.
4ເມືອງຕີເຣ ເມືອງຊີໂດນ ແລະທົ່ວປະເທດຟີລິດສະຕິນເອີຍ! ພວກເຈົ້າຢາກຈະເຮັດຫຍັງ
ກັບເຮົາ ຢາກຈະແກ້ແຄ້ນເຮົາບໍ? ຖ້າເຈົ້າຄິດຈະແກ້ແຄ້ນເຮົາ ເຮົາຈະຕອບແທນການກະທຳນັ້ນ
ໃນທັນທີ. 5ເຈົ້າໄດ້ຂົນເອົາເງິນຄຳຂອງເຮົາໄປ ແລະເອົາເຄື່ອງມີຄ່າຂອງເຮົາໄປຍັງວິຫານທັງ-
ຫລາຍຂອງພວກເຈົ້າ. 6ໄດ້ເອົາປະຊາຊົນຢູດາ ແລະເຢຣູຊາເລັມໄປຈາກປະເທດຂອງເຮົາ
ເພື່ອຂາຍພວກເຂົາໃຫ້ແກ່ຊາວກຣີກ. 7ບັດນີ້ ເຮົາຈະນຳພວກເຂົາອອກຈາກບ່ອນທີ່ເຈົ້າຂາຍ
ພວກເຂົາໄວ້ນັ້ນ ຈະເຮັດຕໍ່ເຈົ້າເໝືອນທີ່ເຈົ້າໄດ້ເຮັດຕໍ່ພວກເຂົາ. 8ຈະຂາຍລູກຊາຍຍິງຂອງພວກ
ເຈົ້າໃຫ້ຊາວຢູດາ ແລ້ວຊາວຢູດາຈະຂາຍເຈົ້າຕໍ່ໄປໃຫ້ຊາວເຊບາທີ່ຢູ່ຫ່າງໄກ ພຣະຜູ້ເປັນເຈົ້າ
ຊົງກ່າວດັ່ງນີ້ແຫລະ.

9 ຈົ່ງປະກາດຂໍ້ຄວາມນີ້ໃຫ້ນາໆ ຊາດຮູ້
ຄືຈົ່ງຈັດຕຽມການຮົບ ແລະເອີ້ນລະດົມຄົນ
ໃຫ້ທະຫານທັງໝົດມາໂຮມກັນ.
10 ຈົ່ງຕີໝາກສົບໄຖຂອງເຈົ້າໃຫ້ເປັນດາບ
ກ່ຽວຂອງເຈົ້າກໍໃຫ້ຕີເປັນຫອກ
ແມ່ນແຕ່ຄົນອ່ອນແອກໍຕ້ອງລຸກຂຶ້ນສູ້.
11 ຊົນຊາດທັງປວງທີ່ຢູ່ອ້ອມແອ້ມຈົ່ງມາໄວໆ
ໃຫ້ເຕົ້າໂຮມກັນຢູ່ໃນຮ່ອມພູນັ້ນ
ຂ້າແດ່ພຣະຜູ້ເປັນເຈົ້າຂໍໂຜດຊົງນຳກອງທັບອັນເກັ່ງກ້າຂອງພຣະອົງລົງມາ.
12 ຊົນຊາດທັງຫລາຍຕ້ອງຕຽມພ້ອມ
ມາຍັງຮ່ອມພູເຢໂຮຊາຟັດ
ຢູ່ບ່ອນນັ້ນພຣະຜູ້ເປັນເຈົ້າຈະພິພາກສາ
ຊົນຊາດທັງປວງທີ່ຢູ່ອ້ອມແອ້ມນັ້ນ.
13 ພວກເຂົາຊົ່ວຮ້າຍຫລາຍ
ໃຫ້ຕັດພວກເຂົາອອກເໝືອນກັບກ່ຽວເຂົ້າ
ຈົ່ງບີບພວກເຂົາເໝືອນກັບບີບ ໝາກອະງຸ່ນ
ທີ່ເຮັດໃຫ້ນ້ຳໄຫລລົງຈົນລົ້ນອ່າງ.
14 ມະຫາຊົນຈຳນວນຫລາຍ
ຢູ່ໃນຮ່ອມພູແຫ່ງການພິພາກສາ
ໃນບ່ອນນັ້ນ ວັນຂອງພຣະຜູ້ເປັນເຈົ້າໃກ້ເຂົ້າມາແລ້ວ.
15 ດວງຕາເວັນ ແລະດວງເດືອນດຳມືດໄປ
ດາວທັງຫລາຍກໍບໍ່ສ່ອງແສງອີກ.

## ພຣະເຈົ້າຊົງອວຍພອນຊາວຢູດາ

16 ພຣະຜູ້ເປັນເຈົ້າຊົງເປັ່ງພຣະສຸລະສຽງຈາກພູຊີໂອນ

ຊົງຮ້ອງສຽງດັງສະໜັ່ນຈາກ ເຢຣູຊາເລັມ
ຈົນແຜ່ນດິນ ແລະທ້ອງຟ້າສະທ້ານຫວັ່ນໄຫວ
ແຕ່ພຣະອົງຈະເປັນກຳແພງປ້ອງກັນປະຊາຊົນ ອິສຣາເອນ.
17 ອິສຣາເອນ ເອີຍ ແລ້ວພວກເຈົ້າຈະຮູ້ວ່າ
ເຮົາຄື ພຣະຜູ້ເປັນເຈົ້າ ຂອງເຈົ້າ
ເຮົາຢູ່ເທິງພູຊີໂອນ ອັນສັກສິດຂອງເຮົາ
ເຢຣູຊາເລັມ ຈະເປັນນະຄອນທີ່ສັກສິດ
ຊາວຕ່າງຊາດຈະບໍ່ຊະນະອີກ.
18 ໃນເວລານັ້ນ ເທິງພູຈະເຕັມໄປດ້ວຍຕົ້ນອະງຸ່ນ
ແລະສັດລ້ຽງທັງຫລາຍ
ຊາວ ຢູດາ ຈະມີນໍ້າຢ່າງບໍລິບູນ
ແມ່ນໍ້າຈະໄຫລຈາກພຣະວິຫານຂອງ ພຣະຜູ້ເປັນເຈົ້າ
ນໍ້ານັ້ນຈະໄຫລຜ່ານຮ່ອມພູຊິດຕີມ.
19 ປະເທດ ເອຢິບ ຈະກາຍເປັນຖິ່ນແຫ້ງແລ້ງກັນດານ
ເມືອງ ເອໂດມ ຈະຖືກທຳລາຍກ້ຽງ
ເພາະວ່າພວກເຂົາໂຈມຕີປະເທດ ຢູດາ
ແລະຂ້າປະຊາຊົນຜູ້ບໍ່ມີຄວາມຜິດໃນເມືອງນັ້ນ.
20-21 ເຮົາຈະແກ້ແຄ້ນແທນຜູ້ທີ່ຖືກຂ້າ
ຈະບໍ່ປານີຜູ້ທີ່ເຮັດຜິດ
ຊາວ ຢູດາ ແລະ ເຢຣູຊາເລັມ ຈະອາໄສຢູ່ໃນທີ່ນັ້ນຕະຫລອດໄປ
ແລະ ພຣະຜູ້ເປັນເຈົ້າ ກໍຈະຊົງສະຖິດຢູ່ເທິງພູຊີໂອນ ນັ້ນ.”

* * *

# ອາໂມດ

## ບົດທີ 1

[1]ຕໍ່ໄປນີ້ແມ່ນຄຳເວົ້າຂອງ ອາໂມດ ຊຶ່ງເປັນຜູ້ລ້ຽງແກະຄົນໜຶ່ງໃນເມືອງ ເຕໂກອາ ກ່ອນ
ແຜ່ນດິນໄຫວສອງປີ ພຣະເຈົ້າໄດ້ນຳຂ່າວມາໃຫ້ອາໂມດທາງນິມິດ ຊຶ່ງຕອນນັ້ນແມ່ນອຸດຊີຢາ
ເປັນເຈົ້າຊີວິດຂອງຊາວຢູດາ ແລະໃນຄາວທີ່ເຢໂຣໂບອາມ ລູກຊາຍຂອງໂຢອາດ ເປັນເຈົ້າ
ຊີວິດແຫ່ງອິສຣາເອນ.

[2] ອາໂມດໄດ້ເວົ້າວ່າ:

“ພຣະຜູ້ເປັນເຈົ້າຊົງສົ່ງສຽງຮ້ອງມາຈາກພູຊີໂອນ
ພຣະສຸລະສຽງຂອງພຣະອົງຍັງດັງກ້ອງຈາກເມືອງເຢຣູຊາເລັມ
ໃນເວລານັ້ນ ປ່າຫຍ້າທັງຫລາຍກໍຫ່ຽວແຫ້ງ
ແລະຫຍ້າຂຽວສົດຢູ່ເທິງຈອມພູກາເມນກໍລ່າເຫລືອງລົງ.”

### ພຣະເຈົ້າຊົງພິພາກສາປະເທດໃກ້ຄຽງຂອງອິສຣາເອນ

### ປະເທດຊີເຣຍ

[3]ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ຊາວດາມາເຊໄດ້ເຮັດຜິດຕື່ມຂຶ້ນຢູ່ເລື້ອຍໆ ເຮົາຈະລົງໂທດ
ພວກເຂົາຢ່າງແນ່ນອນ ກໍຍ້ອນວ່າພວກເຂົາໄດ້ເຮັດການໂຫດຮ້າຍຕໍ່ພວກກີເລອາດ. [4]ດັ່ງນັ້ນ
ເຮົາຈະເຮັດໃຫ້ໄຟໄໝ້ລາຊະອານາຈັກຊີເຣຍ ແລະລາຊະວັງຂອງເຈົ້າຊີວິດເບັນຮາດັດ. [5]ເຮົາ
ຈະທຳລາຍປະຕູເມືອງດາມາເຊໃຫ້ແຕກທະລາຍລົງ ເຮົາຈະຂັບໄລ່ພວກຜູ້ປົກຄອງຮ່ອມພູອາ-
ເວນ ແລະເບັດ-ເອເດັນອອກໜີ ແລ້ວພວກຊີເຣຍຈະຖືກກວາດລ້າງໄປເປັນຊະເລີຍຢູ່ໃນເມືອງ
ກີເຣ.”

### ປະເທດຟີລິດສະຕິນ

[6]ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ພວກຄາຊາໄດ້ເຮັດຜິດຕື່ມຂຶ້ນຢູ່ເລື້ອຍໆ ເຮົາຈະລົງໂທດ
ພວກເຂົາຢ່າງແນ່ນອນ ກໍຍ້ອນວ່າພວກເຂົາຍາດເອົາຊົນຊາດອື່ນໆ ແລ້ວມອບໄວ້ໃນກຳມືຂອງ
ຊາວເອໂດມ. [7]ດັ່ງນັ້ນ ເຮົາຈະເຮັດໃຫ້ກຳແພງເມືອງຄາຊາ ຮ່ວມທັງພະລາຊະວັງຂອງເມືອງ
ນັ້ນເສຍ. [8]ເຮົາຈະຕັດຜູ້ທີ່ອາໃສຢູ່ໃນອາຊະໂດດ ແລະເມືອງອາຊະກາໂລນອອກໜີ ເຮົາຈະໃຊ້
ກຳລັງຕໍ່ສູ້ເມືອງເອັກໂຣນ ແລະຊາວເມືອງຟີລິດສະຕິນທຸກຄົນທີ່ຍັງເຫລືອຢູ່ນັ້ນຕ້ອງຕາຍ.”

### ເມືອງຕີເຣ

[9]ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ຊາວເມືອງຕີເຣໄດ້ເຮັດຜິດຕື່ມຂຶ້ນຢູ່ເລື້ອຍໆ ເຮົາຈະລົງໂທດ
ພວກເຂົາຢ່າງແນ່ນອນ ເພາະວ່າພວກເຂົາໄດ້ຈັບປະຊາຊົນໄປເປັນຊະເລີຍທີ່ເມືອງເອໂດມ
ພວກເຂົາບໍ່ໄດ້ຖືສັນຍາມິດຕະພາບທີ່ພວກເຂົາໄດ້ເຮັດເອົາໄວ້ກັບປະຊາຊົນເຫລົ່ານີ້. [10]ດັ່ງນັ້ນ
ເຮົາຈະເຮັດໃຫ້ກຳແພງເມືອງຕີເຣ ຮ່ວມທັງພະລາຊະວັງຂອງເມືອງນັ້ນຖືກເຜົາຜານທຳລາຍ

ດ້ວຍໄຟ.”

## ປະເທດເອໂດມ

11ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ຊາວເອໂດມໄດ້ເຮັດຜິດຕື່ມຂຶ້ນຢູ່ເລື້ອຍໆ ເຮົາຈະລົງໂທດ
ພວກເຂົາຢ່າງແນ່ນອນ ກໍຍ້ອນວ່າພວກເຂົາໄດ້ໄລ່ຕິດຕາມຂ້າຍາດຕິພີ່ນ້ອງຂອງພວກເຂົາ ຄື
ພວກອິສຣາເອນ ພວກເຂົາຂາດຄວາມເມດຕາ ແລະບໍ່ຍອມຖິ້ມຄວາມໂຫດຮ້າຍຂອງຕົນຈັກ
ເທື່ອ. 12ດັ່ງນັ້ນ ເຮົາຈະເຮັດໃຫ້ໄຟໄໝ້ເຕມານ ແລະຈູດທຳລາຍພະລາຊະວັງຂອງເມືອງໂບ-
ຊະຣາ.”

## ປະເທດອຳໂມນ

13ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ຊາວອຳໂມນໄດ້ເຮັດຜິດຕື່ມຂຶ້ນຢູ່ເລື້ອຍໆ ເຮົາຈະລົງໂທດ
ພວກເຂົາຢ່າງແນ່ນອນ ກໍຍ້ອນວ່າພວກເຂົາຜ່າຕັດທ້ອງແມ່ມານໃນເມືອງກີເລອາດ ແລະໂລບ
ເອົາດິນແດນຂອງແຂວງນັ້ນ. 14ດັ່ງນັ້ນ ເຮົາຈະເຮັດໃຫ້ກຳແພງເມືອງຣັບບາ ຮ່ວມທັງພະລາ-
ຊະວັງຂອງເມືອງນັ້ນຖືກເຜົາຜານທຳລາຍດ້ວຍໄຟ ໃນມື້ແຫ່ງການສູ້ຮົບ ຈະມີສຽງໂຮຮ້ອງກ້ອງ
ສະໜັ່ນ ແລະການສູ້ຮົບຈະດຸເດືອດດັ່ງລົມພະຍຸ. 15ຄັນແລ້ວ ເຈົ້າຊີວິດພ້ອມທັງນາຍທະຫານ
ທັງໝົດຂອງພວກເຂົາ ກໍຈະກາຍໄປເປັນຊະເລີຍເສິກ.”

# ບົດທີ 2

## ປະເທດໂມອາບ

1ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ຊາວໂມອາບໄດ້ເຮັດຜິດຕື່ມຂຶ້ນຢູ່ເລື້ອຍໆ ເຮົາຈະລົງໂທດ
ພວກເຂົາຢ່າງແນ່ນອນ ກໍຍ້ອນວ່າພວກເຂົາເຜົາກະດູກເຈົ້າຊີວິດປະເທດເອໂດມຈົນເປັນຝຸ່ນຄື
ປູນ. 2ເຮົາຈະເຮັດໃຫ້ໄຟໄໝ້ພະລາຊະວັງຂອງເມືອງເກຣິໂຢດປະເທດໂມອາບ ແລະຊາວໂມ-
ອາບຈະຕາຍໄປທ່າມກາງສຽງອຶກກະທຶກຄຶກໂຄມຂອງການສູ້ຮົບ ສ່ວນພວກທະຫານກໍຈະໂຮ-
ຮ້ອງວຸ້ນວາຍ ແລະສຽງແກດັງສະໜັ່ນຫວັ່ນໄຫວຂຶ້ນ. 3ແລ້ວເຮົາຈະຂ້າຜູ້ປົກຄອງຂອງປະເທດ
ໂມອາບ ພ້ອມທັງຜູ້ນຳທຸກໆ ຄົນໃນປະເທດນັ້ນ.”

## ປະເທດຢູດາ

4ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ຊາວຢູດາໄດ້ເຮັດຜິດຕື່ມຂຶ້ນຢູ່ເລື້ອຍໆ ເຮົາຈະລົງໂທດພວກ
ເຂົາຢ່າງແນ່ນອນ ກໍຍ້ອນວ່າພວກເຂົາປະໝາດຂໍ້ບັນຍັດ ແລະບໍ່ຖືຮັກສາຄຳສັ່ງຂອງເຮົາ ພວກ
ເຂົາຫລົງເດີນທາງຜິດ ຄືຕິດຕາມພະອື່ນໆ ທີ່ພວກປູ່ຍ່າຕາຍາຍເຄີຍຖືມາ. 5ດັ່ງນັ້ນ ເຮົາຈະ
ເຮັດໃຫ້ໄຟໄໝ້ພະລາຊະວັງກຸງເຢຣູຊາເລັມ ໃນລາຊະອານາຈັກຢູດາເສຍ.”

## ພຣະເຈົ້າຊົງຕັດສິນປະເທດອິສຣາເອນ

6ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ພວກອິສຣາເອນໄດ້ເຮັດຜິດຕື່ມຂຶ້ນຢູ່ເລື້ອຍໆ ເຮົາຈະລົງ-
ໂທດພວກເຂົາຢ່າງແນ່ນອນ ຍ້ອນວ່າພວກເຂົາໄດ້ຂາຍຄົນຊອບທຳທີ່ພຽງແຕ່ເປັນໜີ້ເຂົາເທົ່າ
ນັ້ນ ແລະຂາຍຄົນທຸກຍາກໄປເປັນທາດ ຍ້ອນວ່າພວກເຂົາບໍ່ມີເງິນໃຊ້ຄ່າເກີບພຽງຄູ່ດຽວ.
7ພວກເຂົາຢຽບຢ່ຳຜູ້ທີ່ອ່ອນແອ ແລະຜູ້ທີ່ໝົດເນື້ອໝົດຕົວ ພ້ອມທັງລັກໂລບເອົາບ່ອນທຳມາຫາ

ກິນຂອງຄົນທຸກຈົນ ສ່ວນພວກຄົນໜຸ່ມ ແລະຄົນເຖົ້າແກ່ກໍພາກັນໄປພົບຍິງໂສເພນີທີ່ພຣະວິ-
ຫານ ຊຶ່ງເປັນການໝິ່ນປະໝາດນາມຊື່ອັນບໍລິສຸດຂອງເຮົາ. [8]ໃນສະຖານທີ່ນະມັດສະການ
ພວກເຂົາພາກັນນອນເຕັງເສື້ອຜ້າທີ່ຄົນເອົາມາຈຳນຳ ແລະໄດ້ໂລບເອົາເຫລົ້າອະງຸ່ນຈາກລູກໜີ້
ມາດື່ມພາຍໃນພຣະວິຫານ.

[9]ຍ້ອນພວກເຂົາເຫລົ່ານີ້ແຫລະ ເຮົາຈຶ່ງໄດ້ທຳລາຍຊາວ ອະໂມຣິດທີ່ສູງເໝືອນດັ່ງຕົ້ນໄມ້
ແລະແຂງເໝືອນດັ່ງຕົ້ນກໍ່ໃຫ້ໝົດສິ້ນໄປ. [10]ປະຊາຊົນຂອງເຮົາເອີຍ ເຮົາໄດ້ນຳພວກເຈົ້າອອກ
ມາຈາກປະເທດເອຢິບ ໂດຍພາພວກເຈົ້າທ່ອງທ່ຽວໄປມາໃນຖິ່ນແຫ້ງແລ້ງກັນດານເປັນເວລາສີ່
ສິບປີ ແລ້ວເຮົາໄດ້ມອບແຜ່ນດິນຂອງຊາວອະໂມຣິດ ໃຫ້ເປັນກຳມະສິດຂອງພວກເຈົ້າ. [11]ເຮົາ
ໄດ້ເລືອກເອົາລູກຊາຍຂອງພວກເຈົ້າບາງຄົນໃຫ້ເປັນຜູ້ປະກາດພຣະທຳ ແລະໃຫ້ຊາຍໜຸ່ມບາງ
ຄົນໃນພວກເຈົ້າເປັນຄົນນາຊີຣີ ຊາວອິສຣາເອນເອີຍ! ສິ່ງນີ້ເປັນຄວາມຈິງຫລືບໍ່? ເຮົາພຣະ-
ຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ແຫລະ.

[12]ແຕ່ວ່າພວກເຈົ້າໃຫ້ຄົນນາຊີຣີດື່ມເຫລົ້າ ແລະຫ້າມປາມພວກປະກາດພຣະທຳບໍ່ໃຫ້ປະກາດ
ຂ່າວຂອງເຮົາ. [13]ແລະບັດນີ້ ເຮົາຈະບີບບັງຄັບພວກເຈົ້າເໝືອນດັ່ງກວຽນໃສ່ເຂົ້າໜັກຢຽບເຕັງ
ເທິງດິນ. [14]ໃນມື້ນັ້ນ ພວກທີ່ແລ່ນວ່ອງໄວກໍບໍ່ສາມາດແລ່ນໜີພົ້ນໄປໄດ້ ຜູ້ທີ່ແຂງແຮງກໍຈະສູນ
ເສຍກຳລັງ ແລະພວກທີ່ອົງອາດກ້າຫານກໍບໍ່ສາມາດຊ່ອຍຊີວິດຂອງຕົນເອງໃຫ້ພົ້ນໄພໄດ້.
[15]ສ່ວນຄົນທີ່ຍິງທະນູກໍບໍ່ສາມາດຢືນຢູ່ໃນສະຖານທີ່ຂອງຕົນເອງໄດ້ ນັກແລ່ນໄວກໍບໍ່ໜີຫລົບໄປ
ໄດ້ ແລະຄົນຂີ່ມ້າກໍບໍ່ສາມາດຫອບເອົາຊີວິດຂອງຕົນຫລົບໄປໄດ້ເຊັ່ນກັນ. [16]ແມ່ນແຕ່ທະຫານຜູ້
ອົງອາດກ້າຫານທີ່ສຸດກໍຕ້ອງເປືອຍຕົວປົບໜີໄປ” ພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ແຫລະ.

# ບົດທີ 3

[1]ຊາວອິສຣາເອນເອີຍ ຈົ່ງຟັງຄຳທີ່ພຣະຜູ້ເປັນເຈົ້າຊົງກ່າວໄວ້ກ່ຽວກັບພວກເຈົ້າວ່າ, “ເຈົ້າ
ເປັນຄອບຄົວຂອງເຮົາ ທີ່ເຮົາໄດ້ນຳອອກມາຈາກປະເທດເອຢິບ. [2]ໃນຈຳນວນຄອບຄົວທັງ-
ຫລາຍໃນໂລກນີ້ ພວກເຈົ້າເປັນຄອບຄົວດຽວທີ່ເຮົາຮູ້ຈັກ ແລະໄດ້ປົກປັກຮັກສາ ສະນັ້ນເຮົາຈະ
ລົງໂທດພວກເຈົ້າ ຍ້ອນຄວາມຜິດທັງຫລາຍທີ່ພວກເຈົ້າໄດ້ເຮັດ.”

## ວຽກງານຂອງຜູ້ປະກາດພຣະທຳ

[3] ສອງຄົນທີ່ອອກເດີນທາງໄປນຳກັນໂດຍປາດສະຈາກການຕົກລົງກັນກ່ອນ
    ຈະໄດ້ຫລືບໍ່?
[4] ຖ້າສິງບໍ່ໄດ້ພົບເຫຍື່ອ ມັນຈະຮ້ອງບໍ?
  ສິງໜຸ່ມຈະຮ້ອງຄາງໃນຖໍ້າຫລືບໍ່ ຖ້າມັນບໍ່ໄດ້ຄຸບສິ່ງໃດ?
[5] ນົກຈະຖືກກັບດັກເທິງດິນໄດ້ບໍ ຖ້າບໍ່ມີເຫຍື່ອລໍ້ມັນ?
  ກັບດັກຈະລັ່ນບໍ ຖ້າວ່າບໍ່ມີສິ່ງໃດເຂົ້າໄປໃນກັບນັ້ນ?
[6] ສຽງແກບຸກໂຈມຕີດັງຂຶ້ນໃນກາງເມືອງ ໂດຍບໍ່ໃຫ້ປະຊາຊົນຢ້ານກົວຈະເປັນໄປໄດ້ບໍ?
  ເຫດການອັນໜ້າຢ້ານເກີດຂຶ້ນໃນເມືອງໜຶ່ງ

ໂດຍທີ່ພຣະຜູ້ເປັນເຈົ້າບໍ່ໄດ້ຊົງກະທຳຈະເປັນໄປໄດ້ບໍ?
7 ຕາມຈິງແລ້ວພຣະຜູ້ເປັນເຈົ້າບໍ່ໄດ້ກະທຳສິ່ງໃດ ໂດຍບໍ່ໄດ້
ບອກແຜນການຂອງພຣະອົງໃຫ້ຜູ້ປະກາດພຣະທຳ
ຊຶ່ງເປັນຜູ້ຮັບໃຊ້ຂອງພຣະອົງຮູ້ກ່ອນ.
8 ເມື່ອໄດ້ຍິນສຽງສິງຮ້ອງຂຶ້ນ ແມ່ນໃຜຈະລະງັບຄວາມຢ້ານໄວ້ໄດ້?
ເມື່ອພຣະຜູ້ເປັນເຈົ້າຊົງບອກແລ້ວ
ໃຜຈະກ້າປະຕິເສດການປະກາດພຣະທຳຂອງພຣະອົງ?

## ກຸງຊາມາເຣຍຖືກພິນາດຈິບຫາຍ

9ຈົ່ງຖະແຫລງຖ້ອຍຄຳໃຫ້ຜູ້ທີ່ຢູ່ໃນພະລາຊະວັງເມືອງອາຊະໂດດ ແລະປະເທດເອຢິບຮັບຮູ້
ວ່າ “ຈົ່ງພາກັນທ້ອນໂຮມຢູ່ກຸງຊາມາເຣຍເສຍກ່ອນ ເພື່ອພິຈາລະນາເບິ່ງເຫດການວຸ້ນວາຍອັນ
ຍິ່ງໃຫຍ່ຢູ່ທີ່ນັ້ນ ພ້ອມທັງການກົດຂີ່ຂົ່ມເຫັງທີ່ມີຢູ່ໃນເມືອງນັ້ນ.”
10ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ປະຊາຊົນເຫລົ່ານີ້ໄດ້ຢູ່ໃນຫໍໂຮງຫລັງໃຫຍ່ທີ່ເຕັມໄປດ້ວຍ
ເຄື່ອງຂອງທີ່ປຸ້ນ ແລະລັກເອົາມາ ພວກເຂົາບໍ່ຮູ້ຈັກປະພຶດຕົວຢ່າງສັດຊື່ເລີຍ. 11ເພາະສະນັ້ນ
ພວກສັດຕູຈະມາອ້ອມປະເທດຂອງພວກເຂົາ ແລະທຳລາຍກຳແພງປ້ອງກັນ ແລ້ວປຸ້ນເອົາສິ່ງ
ຂອງໃນຫໍໂຮງຫລັງໃຫຍ່ນັ້ນໄປ.”
12ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ເມື່ອແກະໂຕໜຶ່ງຖືກສິງກັດກິນ ຜູ້ລ້ຽງແກະຍາດເອົາພຽງແຕ່
ຂາສອງເບື້ອງ ແລະຫູໃບໜຶ່ງໄດ້ສັນໃດ ຝ່າຍພຣະເຈົ້າກໍຈະຊ່ອຍເຫລືອຊາວອິສຣາເອນພຽງ
ແຕ່ສ່ວນນ້ອຍໆ ທີ່ອາໄສຢູ່ໃນກຸງຊາມາເຣຍໃຫ້ພົ້ນໄພໄດ້ສັນນັ້ນ.” 13ພຣະເຈົ້າແຫ່ງຈັກກະ-
ວານຊົງກ່າວວ່າ, “ບັດນີ້ ຈົ່ງຟັງ ແລະບອກເຕືອນເຊື້ອສາຍຢາໂຄບວ່າ. 14ໃນມື້ທີ່ເຮົາລົງໂທດ
ພວກອິສຣາເອນຍ້ອນຄວາມບາບຂອງພວກເຂົາ ເຮົາຈະທຳລາຍແທ່ນບູຊາຂອງເມືອງເບັດເອນ
ຄືທຳລາຍແຈທັງສີ່ຂອງແທ່ນນັ້ນ. 15ເຮົາຈະທຳລາຍເຮືອນພັກລະດູໜາວ ແລະເຮືອນພັກລະດູ
ຮ້ອນ ສ່ວນເຮືອນທີ່ຕົກແຕ່ງດ້ວຍງາຈະລົ້ມລົງເປັນເຮືອນຮ້າງ ແລະເຮືອນທຸກໆ ຫລັງຈະຖືກ
ທຳລາຍ.”

# ບົດທີ 4

1ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ຍິງຊາວຊາມາເຣຍເອີຍ ຈົ່ງຟັງເທີ້ນ ພວກເຈົ້າໄດ້ອ້ວນພີ
ເໝືອນງົວທີ່ລ້ຽງໄວ້ຢ່າງດີ ພວກເຈົ້າຂົ່ມເຫັງຄົນອ່ອນແອ ຢຽບຢ່ຳຄົນຈົນ ແລະບອກຜົວໃຫ້ເອົາ
ເຫລົ້າມາກິນ.” 2ຍ້ອນພຣະຜູ້ເປັນເຈົ້າຊົງບໍລິສຸດ ພຣະອົງຈຶ່ງຊົງກ່າວຢ່າງເດັດຂາດວ່າ, “ວັນ
ທັງຫລາຍຈະມາເຖິງຢ່າງແນ່ນອນ ຄືພວກສັດຕູຈະເອົາຂໍລາກແກ່ພວກເຈົ້າໄປ ແຕ່ລະຄົນໃນ
ພວກເຈົ້າຈະເປັນເໝືອນປາທີ່ຖືກເບັດ. 3ແລ້ວພວກເຈົ້າຈະຖືກໂຍນອອກໄປທາງບ່ອນກຳແພງທີ່
ແຕກເພ ແລະຈະຖືກໂຍນຖິ້ມອອກນອກ” ນີ້ແຫລະຄືຄຳທີ່ພຣະຜູ້ເປັນເຈົ້າຊົງກ່າວໄວ້.

## ພວກອິສຣາເອນບໍ່ເຂົ້າໃຈຄຳສອນຂອງພຣະຜູ້ເປັນເຈົ້າ

4ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ຊາວອິສຣາເອນເອີຍ ໃຫ້ພາກັນໄປເຮັດຜິດສາ ຄືເຮັດໃຫ້

ສະຖານທີ່ສັກສິດທີ່ເມືອງເບັດເອນ ແລະໄປເຮັດຜິດທີ່ເມືອງກິນການຫລາຍກວາເກົ່າອີກ ແລະ
ທຸກໆສາມມື້ໃດໃຫ້ນຳເອົາສິ່ງຂອງໜຶ່ງສ່ວນສິບຂອງເຈົ້າເຂົ້າມາຖວາຍຄືກັນ. [5]ໃຫ້ເອົາເຂົ້າຈີ່ມາ
ຖວາຍເປັນການຂອບພຣະຄຸນ ແລະໃຫ້ຖວາຍຕາມໃຈສະໝັກຂອງພວກເຈົ້າສາ ເພາະພວກເຈົ້າ
ອວດຕົວ ແລະການເຮັດຢ່າງນີ້ ມັນກໍຖືກໃຈພວກເຈົ້າ.”

[6]ພຣະຜູ້ເປັນເຈົ້າຊົງກ່າວວ່າ “ແມ່ນເຮົາຜູ້ດຽວເທົ່ານັ້ນທີ່ນຳເອົາຄວາມອຶດຢາກມາສູ່ເມືອງ
ທັງຫລາຍຂອງພວກເຈົ້າ ເພື່ອວ່າບໍ່ໃຫ້ພວກເຈົ້າມີອາຫານກິນ ແຕ່ພວກເຈົ້າກໍບໍ່ຍອມຄືນມາຫາ
ເຮົາ. [7]ເຮົາບໍ່ໄດ້ອະນຸຍາດໃຫ້ຝົນຕົກຕາມທີ່ຕົ້ນເຂົ້າຕ້ອງການ ເຮົາໄດ້ເຮັດໃຫ້ຝົນຕົກລົງໃສ່ແຕ່
ບາງເມືອງເທົ່ານັ້ນ ໂດຍບໍ່ໃຫ້ຕົກໃສ່ເມືອງອື່ນ ສ່ວນຕາມທົ່ງນາກໍຈະຖືກຝົນຕົກລົງເປັນບາງ
ບ່ອນ ແຕ່ວ່າບ່ອນໃດທີ່ບໍ່ມີນໍ້າຝົນ ພືນລະປູກກໍບໍ່ງອກງາມຂຶ້ນໄດ້ ຍ້ອນຂາດນໍ້າ. [8]ປະຊາຊົນ
ໃນສອງສາມຫົວເມືອງກໍພາກັນໄປຊອກຫາດື່ມນໍ້າໃນເມືອງໃກ້ຄຽງ ແຕ່ນໍ້າກໍບໍ່ມີພຽງພໍຈະດື່ມ
ເຖິງປານນັ້ນ ພວກເຈົ້າກໍຍັງບໍ່ກັບຄືນມາຫາເຮົາ.”

[9]ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ເຮົາໄດ້ໃຫ້ພະຍາດນາໆ ຊະນິດຂອງຕົ້ນໄມ້ ຄືເພ້ຍດຳ ແລະ
ເພ້ຍແດງມາທຳລາຍພືນລະປູກຂອງພວກເຈົ້າ ຝູງຕັກແຕນໄດ້ກິນຜັກ ແລະຕົ້ນອະງຸ່ນຂອງພວກ
ເຈົ້າ ພ້ອມທັງຕົ້ນໝາກເດື່ອເທດ ຕົ້ນໝາກກອກ ແຕ່ເຖິງປານນັ້ນ ພວກເຈົ້າກໍຍັງບໍ່ກັບຄືນມາ
ຫາເຮົາ.

[10]ເຮົາໄດ້ເຮັດໃຫ້ໂລກລະບາດຕົກທ່າມກາງພວກເຈົ້າ ເໝືອນດັ່ງທີ່ເຮົາໄດ້ເຮັດກັບພວກເອ-
ຢິບມາເທື່ອໜຶ່ງແລ້ວ ເຮົາໄດ້ຂ້າຊາຍໜຸ່ມຫລາຍຄົນໃນສະໜາມຮົບ ແລະຈັບເອົາມ້າຂອງພວກ
ເຈົ້າ ພາຍໃນຄ້າຍພັກອາໄສຂອງພວກເຈົ້າ ເຮົາໄດ້ເຮັດໃຫ້ເກີດມີກິ່ນເໝັນເພື່ອໃຫ້ພວກເຈົ້າດົມ
ແຕ່ເຖິງປານນັ້ນ ພວກເຈົ້າກໍຍັງບໍ່ກັບຄືນມາຫາເຮົາ.”

[11]ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ເຮົາໄດ້ທຳລາຍບາງຄົນໃນພວກເຈົ້າ ເໝືອນດັ່ງທຳລາຍ
ເມືອງໂຊໂດມ ແລະເມືອງໂກໂມຣາ ພວກເຈົ້າປຽບເໝືອນດົ້ນຟືນທີ່ເອົາມາຈາກກອງໄຟທີ່ກຳ-
ລັງໄໝ້ຢູ່ ເຖິງປານນັ້ນ ພວກເຈົ້າກໍຍັງບໍ່ກັບຄືນມາຫາເຮົາ.

[12]ດັ່ງນັ້ນ ຊາວອິສຣາເອນເອີຍ ເຮົາກຳລັງຈະກະທຳສິ່ງເຫລົ່ານີ້ກັບພວກເຈົ້າ ພວກເຈົ້າຈົ່ງ
ຕຽມຕົວເຂົ້າເຝົ້າຊ້ອງພຣະພັກແຫ່ງການພິພາກສາຂອງພຣະເຈົ້າຂອງພວກເຈົ້າສາ.”

[13] ພຣະຜູ້ເປັນເຈົ້າຊົງສ້າງພູທັງຫລາຍ ແລະບັນດານໃຫ້ເກີດລົມ
ພຣະອົງຊົງໃຫ້ມະນຸດຮູ້ຈັກຄວາມຄິດຂອງພຣະອົງ
ຊົງປ່ຽນກາງເວັນໃຫ້ເປັນກາງຄືນ
ຊົງເປັນມະຫາກະສັດປົກຄອງທົ່ວໂລກນີ້
ພຣະນາມຂອງພຣະອົງແມ່ນພຣະເຈົ້າແຫ່ງຈັກກະວານ.

## ບົດທີ 5

### ພຣະຜູ້ເປັນເຈົ້າຮຽກຮ້ອງໃຫ້ອິສຣາເອນກັບໃຈ

[1-2]ຊາວອິສຣາເອນເອີຍ! ຈົ່ງຟັງເພງໄວ້ອາໄລນີ້ເທີ້ນ ອິສຣາເອນເປັນເໝືອນຍິງສາວທີ່ລົ້ມ

ແລ້ວຈະລຸກຂຶ້ນມາອີກບໍ່ໄດ້ ນາງນອນຢຽດຢູ່ເທິງດິນໂດຍບໍ່ມີຜູ້ໃດຊ່ອຍດຶງຂຶ້ນ.
3ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ເມືອງໜຶ່ງໃນອິສຣາເອນ ເພິ່ນໄດ້ສົ່ງທະຫານພັນຄົນອອກໄປ
ແຕ່ມີພຽງຮ້ອຍຄົນເທົ່ານັ້ນທີ່ກັບຄືນມາ ແລະເມືອງອື່ນໆກໍສົ່ງທະຫານຮ້ອຍຄົນອອກໄປ ແຕ່ມີ
ພຽງສິບຄົນເທົ່ານັ້ນທີ່ໄດ້ກັບຄືນມາ.”
4ພຣະຜູ້ເປັນເຈົ້າຊົງກ່າວຕໍ່ພວກອິສຣາເອນວ່າ, “ຈົ່ງມາຫາເຮົາ ແລະພວກເຈົ້າຈະມີຊີວິດຢູ່
5ຢ່າພາກັນໄປນະມັດສະການທີ່ເມືອງເບເອ-ເຊບາ ແລະຢ່າໄປຊອກຫາເຮົາທີ່ເບັດເອນ ເພາະ-
ວ່າເບັດເອນຈະບໍ່ມີ ຢ່າໄປເມືອງກິນການ ເພາະວ່າ ຄົນໃນເມືອງນັ້ນໄດ້ຖືກເນລະເທດໝົດ
ແລ້ວ.” 6ຊາວໂຢເຊັບເອີຍ ຈົ່ງໄປຫາພຣະຜູ້ເປັນເຈົ້າ ແລ້ວພວກເຈົ້າຈະມີຊີວິດຢູ່ ຖ້າວ່າພວກ
ເຈົ້າບໍ່ຍອມໄປ ພຣະອົງຈະກຳຈັດພວກເຈົ້າເໝືອນກັບໄຟເຜົາຜານ ໄຟນັ້ນຈະລຸກໄໝ້ຊາວເບັດ-
ເອນ ແລະບໍ່ມີໃຜຈະມອດມັນໄດ້. 7ຄວາມທຸກລຳບາກຈະເກີດຂຶ້ນກັບພວກເຈົ້າ ຜູ້ທີ່ບໍ່ສັດຊື່ແລະ
ຜູ້ທີ່ເຮັດໃຫ້ຜູ້ຖືກກາຍເປັນຜູ້ຜິດ.

8 ພຣະຜູ້ເປັນເຈົ້າຊົງສ້າງດວງດາວ
ເປັນຕົ້ນວ່າດາວລູກໄກ່ ແລະດາວໄຖ
ພຣະອົງຊົງໃຫ້ຄວາມມືດກັບກາຍເປັນຄວາມສະຫວ່າງ
ແລະໃຫ້ກາງເວັນກາຍເປັນກາງຄືນ
ແລ້ວພຣະອົງຊົງເອີ້ນນ້ຳຂຶ້ນມາຈາກທະເລ
ຊົງຖອກເທນ້ຳນັ້ນລົງເທິງແຜ່ນດິນໂລກ
ພຣະອົງຊົງພຣະນາມວ່າພຣະຜູ້ເປັນເຈົ້າ.

9ພຣະອົງຊົງນຳເອົາການທຳລາຍມາສູ່ບ່ອນຍາມປ້ອງກັນ ແລະທີ່ໝັ້ນອັນສຳຄັນ.
10ພວກເຈົ້າໄດ້ກຽດຊັງຜູ້ທີ່ຍຶດໝັ້ນຢູ່ໃນຄວາມຊອບທຳ ແລະຜູ້ທີ່ໃຫ້ການຕາມຄວາມຈິງທຸກ
ຢ່າງຢູ່ໃນສານ. 11ພວກເຈົ້າໄດ້ຂົ່ມເຫັງຄົນທຸກຍາກ ແລະລັກເອົາເຄື່ອງຂອງພວກເຂົາ ດ້ວຍ
ເຫດນີ້ ພວກເຈົ້າຈຶ່ງໄດ້ກໍ່ເຮືອນໄວ້ແຕ່ບໍ່ມີໂອກາດຈະໄດ້ຢູ່ ຫລືບໍ່ໄດ້ດື່ມນ້ຳອະງຸ່ນທີ່ມາຈາກ
ສວນທີ່ພວກເຈົ້າປູກໄວ້. 12ເພາະເຮົາຮູ້ຈັກວ່າຄວາມບາບຂອງພວກເຈົ້າ ຄືຄວາມຊົ່ວຊ້າທີ່ພວກ
ເຈົ້າໄດ້ສ້າງຂຶ້ນມານັ້ນຮ້າຍແຮງຫລາຍທີ່ສຸດ ພວກເຈົ້າບຽດບຽນຄົນດີ ຮັບເງິນສິນບົນ ແລະບໍ່
ໃຫ້ຄວາມຍຸດຕິທຳແກ່ຄົນທຸກຈົນຢູ່ໃນສານ 13ສະໄໝນີ້ເປັນສະໄໝຊົ່ວຮ້າຍ ສະນັ້ນ ພວກທີ່ມີ
ຄວາມສະຫລາດຫລັກແຫລມ ຈຶ່ງຕ້ອງມິດງຽບຢູ່.
14ເພື່ອພວກເຈົ້າຈະມີຊີວິດຢູ່ຕໍ່ໄປ ຈົ່ງພະຍາຍາມເຮັດແຕ່ໃນສິ່ງທີ່ຖືກຕ້ອງ ແລະຢ່າສະ-
ແຫວງຫາຄວາມຊົ່ວ ແລ້ວພຣະເຈົ້າແຫ່ງຈັກກະວານຈະຊົງສະຖິດຢູ່ກັບພວກເຈົ້າ ຕາມທີ່ພວກ
ເຈົ້າໄດ້ເວົ້າອ້າງເຖິງພຣະອົງ. 15ຈົ່ງກຽດຊັງຄວາມຊົ່ວ ແລະຮັກແຕ່ຄວາມດີ ແລ້ວໃຫ້ການຢ່າງ
ສັດຊື່ຢູ່ໃນສານ ບາງທີພຣະເຈົ້າແຫ່ງຈັກກະວານຈະຊົງເມດຕາປະຊາຊົນທີ່ຍັງເຫລືອຢູ່ໃນປະ-
ເທດນີ້. 16ດັ່ງນັ້ນ ພຣະເຈົ້າແຫ່ງຈັກກະວານຈຶ່ງຊົງກ່າວວ່າ, “ຕໍ່ໄປຕາມຖະໜົນຕ່າງໆໃນເມືອງ
ຈະມີການຮ້ອງໄຫ້ ແລະຄ່ຳຄວນດ້ວຍຄວາມທຸກລຳບາກ ພວກເຂົາຈະເອີ້ນຄົນຕາມເຂດຊົນນະ-
ບົດ ມາຮ່ວມຮ້ອງໄຫ້ຄ່ຳຄວນນຳກັນກັບຜູ້ທີ່ຮັບຈ້າງຮ້ອງໄຫ້ນັ້ນ. 17ແລ້ວການຮ້ອງໄຫ້ຄ່ຳຄວນກໍ

ຈະເກີດຂຶ້ນໃນສວນອະງຸ່ນທຸກໆແຫ່ງ ເພາະວ່າເຮົາຈະມາລົງໂທດພວກເຈົ້າ” ພຣະຜູ້ເປັນເຈົ້າ
ຊົງກ່າວໄວ້ດັ່ງນີ້.
18ໃນມື້ນັ້ນ ຄວາມທຸກຍາກລຳບາກຈະເກີດຂຶ້ນ ແຕ່ຜູ້ທີ່ຄອຍຖ້າວັນຂອງພຣະຜູ້ເປັນເຈົ້າ ມື້
ນັ້ນຈະບໍ່ມີຫຍັງດີຂຶ້ນສຳລັບພວກເຈົ້າ ເພາະວ່າມື້ນັ້ນຈະເປັນມື້ແຫ່ງຄວາມມືດມົນ ບໍ່ແມ່ນມື້ແຫ່ງ
ແສງສະຫວ່າງ. 19ມື້ນັ້ນຈະເປັນເໝືອນຄົນທີ່ແລ່ນປົບໜີຈາກສິງ ແລ້ວພົບໝີ ຫລືກັບຄືນເມືອ
ເຮືອນແລ້ວເອົາມືຂັ້ນໃສ່ຝາເຮືອນ ແລະຖືກງູກັດ. 20ມື້ຂອງພຣະຜູ້ເປັນເຈົ້າຈະນຳເອົາຄວາມ
ມືດມົນມາ ບໍ່ແມ່ນນຳເອົາແສງສະຫວ່າງ ມັນເປັນມື້ແຫ່ງຄວາມໂສກເສົ້າ ໂດຍບໍ່ມີແສງສະ-
ຫວ່າງເກີດຂຶ້ນເລີຍ.
21ເຮົາກຽດຊັງງານສະຫລອງທາງສາດສະໜາຂອງພວກເຈົ້າ ເຮົາບໍ່ພໍໃຈໃນການຢ່າງນີ້.
22ເວລາເຈົ້ານຳເອົາເຄື່ອງເຜົາບູຊາ ແລະຜົນລະປູກມາຖວາຍໃຫ້ເຮົາ ເຮົາຈະບໍ່ຍອມຮັບເອົາ
ແລະສັດໂຕຕຸ້ຍພີ ທີ່ພວກເຈົ້ານຳມາຖວາຍບູຊາຂອບພຣະຄຸນ ເຮົາຈະບໍ່ຍອມຮັບເອົາ. 23ຈົ່ງເຊົາ
ຮ້ອງເພງ ເຮົາບໍ່ຢາກຟັງເຄື່ອງເສບດົນຕີຂອງພວກເຈົ້າ. 24ຈົ່ງໃຫ້ຄວາມສັດຊື່ ແລະຄວາມຊອບ
ທຳຫລັ່ງໄຫລໄປຢ່າງສະບາຍ ເໝືອນດັ່ງສາຍນໍ້າທີ່ບໍ່ມີວັນແຫ້ງໝົດໄປ.
25ຊາວອິສຣາເອນເອີຍ! ໃນເວລາທີ່ຢູ່ໃນຖິ່ນແຫ້ງແລ້ງກັນດານສີ່ສິບປີນັ້ນ ພວກເຈົ້າບໍ່ໄດ້ນຳ
ເອົາເຄື່ອງບູຊາຖວາຍແກ່ເຮົາແມ່ນບໍ? 26ແຕ່ຕໍ່ໄປນີ້ ພວກເຈົ້າຈະຖືເອົາຮູບເຄົາລົບ ຄືສັກກຸດ
ແລະໄກວັນ ຊຶ່ງພວກເຈົ້າໄດ້ສ້າງຂຶ້ນມາສຳລັບຕົນເອງ. 27ແລະເຮົາຈະເນລະເທດພວກເຈົ້າ
ອອກໜີໄປກາຍເມືອງດາມາເຊ” ພຣະຜູ້ເປັນເຈົ້າຜູ້ຊົງພຣະນາມວ່າ ພຣະເຈົ້າແຫ່ງຈັກກະວານ
ໄດ້ຊົງກ່າວໄວ້ດັ່ງນີ້ແຫລະ.

# ບົດທີ 6

## ພວກອິສຣາເອນຖືກທຳລາຍ

1ພວກເຈົ້ານາຍໃນລາຊະອານາຈັກຍິ່ງໃຫຍ່ຂອງອິສຣາເອນ ຄືຜູ້ທີ່ໃຊ້ຊີວິດຢູ່ຢ່າງສະໜຸກ
ສະບາຍໃນເມືອງຊີໂອນ ຜູ້ທີ່ຢູ່ຢ່າງປອດໄພໃນກຸງຊາມາເຣຍ ແລະຜູ້ທີ່ປະຊາຊົນໄດ້ໄປຂໍ
ຄວາມຊ່ອຍເຫລືອ ຈະໄດ້ຮັບຄວາມທຸກຍາກລຳບາກ. 2ຈົ່ງເບິ່ງເມືອງການເນ ແລະນະຄອນ
ຮຳມາດ ແລ້ວລົງໄປໃນເມືອງກັດ ຊຶ່ງເປັນເມືອງຂອງພວກຟີລິດສະຕິນ ບ່ອນເຫລົ່ານີ້ດີກວ່າ
ລາຊະອານາຈັກຢູດາ ແລະອິສຣາເອນຫລືບໍ່ ແລະເຂດແດນເຫລົ່ານີ້ໃຫຍ່ກວ່າເຂດແດນຂອງ
ພວກເຈົ້າຫລືບໍ່. 3ພວກເຈົ້າພະຍາຍາມຢຸດຢັ້ງບໍ່ໃຫ້ຄວາມຫລົ້ມຈົມມາຮອດພວກເຈົ້າ ແຕ່ພວກ
ເຈົ້າກໍຍັງສະໜັບສະໜູນຄົນເຮັດຊົ່ວຢູ່.
4ຄວາມທຸກລຳບາກຈະເກີດແກ່ພວກເຈົ້າຜູ້ທີ່ນອນເທິງຕຽງທີ່ຕົກແຕ່ງດ້ວຍງາຊ້າງຢ່າງສຸກ
ສະບາຍ ບ່ອນນອນຢຽດຢ່າງມີຄວາມສຸກຢູ່ເທິງຕັ່ງນວມ ແລະຈັດງານລ້ຽງດ້ວຍອາຫານຊັ້ນດີ
ຄືຊີ້ນງົວ ແລະຊີ້ນແກະຊະນິດທີ່ໜຶ່ງ. 5ພວກເຈົ້າມັກແຕ່ງເພງຮ້ອງຫລິ້ນດ້ວຍພິນເໝືອນດັ່ງດາ-
ວິດ ແລະປະດິດເຄື່ອງດົນຕີ. 6ດື່ມເຫລົ້າອະງຸ່ນຫລາຍ ແລະທານໍ້າມັນຫອມຢ່າງດີ ບໍ່ໄດ້ເສົ້າ
ເສຍໃຈຕໍ່ການຮ້າງເປົ່າຂອງລາຊະອານາຈັກອິສຣາເອນເລີຍ. 7ດັ່ງນັ້ນ ພວກເຈົ້າຈະເປັນຜູ້ທຳ-

ອິດທີ່ຖືກເບລະເທດ ສ່ວນການກິນລ້ຽງຕ່າງໆ ຈະບໍ່ມີອີກຕໍ່ໄປ.
[8]ພຣະຜູ້ເປັນເຈົ້າຊົງສາບານໄວ້ຢ່າງໜັກແໜ້ນ ພຣະເຈົ້າແຫ່ງຈັກກະວານຊົງກ່າວວ່າ, "ເຮົາ
ກຽດຊັງຄວາມຈອງຫອງຂອງພວກອິສຣາເອນ ແລະກຽດຊັງທໍາໂຮງໃຫຍ່ຂອງພວກເຂົາ ເຮົາຈະ
ມອບເມືອງນີ້ກັບທຸກໆສິ່ງໃນເມືອງນີ້ໄວ້ໃນກຳມືຂອງສັດຕູ. [9]ຖ້າຫາກວ່າໃນຄອບຄົວໜຶ່ງມີຄົນຢູ່
ສິບຄົນ ພວກເຂົາກໍຈະຕ້ອງຕາຍໝົດ. [10]ເວລາທີ່ພີ່ນ້ອງຂອງຜູ້ຕາຍຜູ້ໜຶ່ງມາເອົາສົບໄປຈູດ
ລາວໄດ້ຮ້ອງຫາຜູ້ທີ່ກຳລັງລີ້ຢູ່ໃນແຈເຮືອນນັ້ນວ່າ "ຢູ່ນີ້ມີຄົນຕາຍອີກບໍ?" ຜູ້ລີ້ນັ້ນກໍຕອບວ່າ "ບໍ່
ມີດອກ" ແລະບອກຜູ້ຖາມອີກວ່າ "ຢ່າປາກເດີ້! ພວກເຮົາຕ້ອງລະວັງ ຢ່າໃຫ້ຜູ້ໃດອອກພຣະ-
ນາມຂອງພຣະຜູ້ເປັນເຈົ້າ."
[11]ເມື່ອພຣະຜູ້ເປັນເຈົ້າຊົງອອກຄຳສັ່ງແລ້ວ ເຮືອນໃຫຍ່ແລະເຮືອນນ້ອຍທັງຫລາຍຈະຖືກ
ເພພັງລົງເປັນທ່ອນໆ. [12]ຝູງມ້າຈະແລ່ນຂຶ້ນໜ້າຜາບໍ? ແລະພວກຄົນຈະເອົາງົວໄປໄຖນໍ້າທະເລ
ບໍ? ແຕ່ພວກເຈົ້າກໍຍັງປ່ຽນຄວາມຍຸດຕິທຳເປັນຄວາມອະທຳ ແລະເຮັດໃຫ້ຄວາມຖືກຕ້ອງກາຍ-
ເປັນຄວາມຜິດ. [13]ພວກເຈົ້າທັງຫລາຍຍິນດີຍ້ອນຍຶດເອົາເມືອງໂລເດບາ ໄດ້ ແລະຍັງເວົ້າວ່າ
"ພວກເຮົາຍັງມີກຳລັງພຽງພໍທີ່ຈະຍຶດເອົາເມືອງການາຢິມອີກ." [14]ພຣະເຈົ້າແຫ່ງຈັກກະວານຊົງ
ກ່າວຕອບວ່າ, "ຊາວອິສຣາເອນເອີຍ ເຮົາກຳລັງຈະສົ່ງຊົນຊາດໜຶ່ງມາຕໍ່ສູ້ພວກເຈົ້າ ພວກເຂົາ
ຈະກົດຂີ່ຂົ່ມເຫັງພວກເຈົ້າຕັ້ງແຕ່ທາງຫວ່າງຮ່ອມພູຮາມາດທາງທິດເໜືອ ຈົນຮອດຮ່ອມພູຢໍ-
ແດນຢູ່ທາງທິດໃຕ້."

# ບົດທີ 7

## ພຣະເຈົ້າຊົງໃຫ້ອາໂມດເຫັນຕັກແຕນທາງນິມິດ

[1]ພຣະຜູ້ເປັນເຈົ້າຊົງສະແດງໃຫ້ຂ້າພະເຈົ້າເຫັນນິມິດ ຄືຂ້າພະເຈົ້າໄດ້ເຫັນພຣະອົງຊົງບັນ-
ດານໃຫ້ຝູງຕັກແຕນກິນຫຍ້າທີ່ກຳລັງປົ່ງໃໝ່ ຫລັງຈາກການເກັບກ່ຽວຖວາຍໃຫ້ເຈົ້າຊີວິດແລ້ວ.
[2]ໃນນິມິດນັ້ນ ຂ້າພະເຈົ້າໄດ້ເຫັນຝູງຕັກແຕນກິນໝົດທຸກຢ່າງທີ່ມີສີຂຽວສົດຢູ່ໃນເຂດແດນນັ້ນ
ຂ້າພະເຈົ້າຈຶ່ງເວົ້າວ່າ "ຂ້າແດ່ພຣະຜູ້ເປັນເຈົ້າ ຂໍໂຜດອະໄພໃຫ້ແກ່ໄພ່ພົນຂອງພຣະອົງເທີ້ນ
ພວກນີ້ຈະສືບຊີວິດຕໍ່ໄປໄດ້ຢ່າງໃດ ເພາະວ່າພວກເຂົາຍັງເປັນກຸ່ມນ້ອຍ ແລະກຸ່ມອ່ອນແອຢູ່."
[3]ຕໍ່ມາ ພຣະຜູ້ເປັນເຈົ້າຊົງປ່ຽນພຣະໄທ ແລະຊົງກ່າວວ່າ "ສິ່ງທີ່ເຈົ້າໄດ້ເຫັນນັ້ນຈະບໍ່ບັງເກີດ
ຂຶ້ນມາ."

## ພຣະເຈົ້າຊົງໃຫ້ອາໂມດເຫັນໄຟໃນນິມິດ

[4]ພຣະຜູ້ເປັນເຈົ້າຊົງສະແດງໃຫ້ຂ້າພະເຈົ້າເຫັນນິມິດຢ່າງນີ້ ຄືຂ້າພະເຈົ້າໄດ້ເຫັນພຣະອົງຊົງ
ຈັດຕຽມການລົງໂທດໄພ່ພົນຂອງພຣະອົງ ໄຟໄດ້ລຸກໄໝ້ມະຫາສະໝຸດຢູ່ໃຕ້ພື້ນໂລກ ແລະເລີ່ມ
ໄໝ້ຜືນແຜ່ນດິນ. [5]ຄັນແລ້ວຂ້າພະເຈົ້າໄດ້ເວົ້າວ່າ, "ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງໂຜດໃຫ້ເຫດ-
ການນີ້ຍຸດຕິລົງເທີ້ນ ພວກໄພ່ພົນຂອງພຣະອົງຈະສືບຊີວິດຕໍ່ໄປໄດ້ຢ່າງໃດ ເພາະວ່າພວກເຂົາ
ຍັງເປັນກຸ່ມນ້ອຍ ແລະອ່ອນແອຢູ່." [6]ຝ່າຍພຣະຜູ້ເປັນເຈົ້າກໍຊົງປ່ຽນແປງພຣະໄທ ແລະຊົງ
ກ່າວວ່າ "ສິ່ງນີ້ຈະບໍ່ບັງເກີດຂຶ້ນມາອີກເໝືອນກັນ."

## ພຣະເຈົ້າຊົງໃຫ້ອາໂມດເຫັນສາຍເນັ່ງທາງນິມິດ

[7]ພຣະຜູ້ເປັນເຈົ້າຊົງສະແດງໃຫ້ຂ້າພະເຈົ້າເຫັນນິມິດຢ່າງນີ້ ຄືຂ້າພະເຈົ້າໄດ້ເຫັນພຣະອົງຊົງ
ຢືນຢູ່ເທິງກຳແພງທີ່ສ້າງຂຶ້ນດ້ວຍການໃຊ້ສາຍເນັ່ງ ແລະພຣະອົງກໍຊົງຖືສາຍເນັ່ງນັ້ນໄວ້ໃນ
ພຣະຫັດ. [8]ແລ້ວພຣະອົງຊົງຖາມຂ້າພະເຈົ້າວ່າ, "ອາໂມດເອີຍ ເຈົ້າເຫັນຫຍັງແດ່?" ຂ້າພະເຈົ້າ
ຕອບວ່າ "ເຫັນສາຍເນັ່ງ." ແລ້ວພຣະອົງຊົງກ່າວວ່າ, "ຈົ່ງເບິ່ງນີ້ເທີ້ນ ເຮົາກຳລັງໃຊ້ມັນເພື່ອ
ສະແດງເຖິງຄວາມຜິດຂອງໄພ່ພົນທີ່ໄດ້ກະທຳມາ ເຮົາຈະບໍ່ປ່ຽນໃຈຈາກການລົງໂທດ. [9]ບ່ອນທີ່
ເຊື້ອສາຍຂອງອີຊາກນະມັດສະການຈະຖືກທຳລາຍລົງ ແລະບ່ອນສັກສິດຂອງພວກອິສຣາເອນ
ຈະຮ້າງເປົ່າ ເພາະວ່າ ເຮົາຈະໃຫ້ເສິກເກີດຂຶ້ນ ຕໍ່ສູ້ຄອບຄົວຂອງເຈົ້າຊີວິດເຢໂຣໂບອາມ.

## ອາໂມດ ແລະ ອາມາຊີຢາ

[10]ຄັນຕໍ່ມາ ອາມາຊີຢາປະໂລຫິດຂອງເມືອງເບັດເອນ ໄດ້ລາຍງານໃຫ້ເຢໂຣໂບອາມເຈົ້າ
ຊີວິດຂອງຊາວອິສຣາເອນຊາບວ່າ "ອາໂມດກຳລັງມີແຜນອຸບາຍກະບົດຕໍ່ສູ້ພຣະອົງຢູ່ໃນອິ-
ສຣາເອນ ຄວາມເວົ້າຂອງລາວຈະທຳລາຍປະເທດນີ້. [11]ລາວເວົ້າວ່າ ເຢໂຣໂບອາມຈະຕ້ອງ
ຕາຍຢູ່ໃນສະໜາມຮົບ ແລະພວກອິສຣາເອນຈະຕ້ອງຖືກເນລະເທດ ອອກຈາກແຜ່ນດິນຂອງ
ພວກເຂົາ."

[12]ອາມາຊີຢາຈຶ່ງເວົ້າຕໍ່ອາໂມດວ່າ "ໝໍມໍເອີຍ ຈົ່ງກັບຄືນເມືອລາຊະອານາຈັກຢູດາ ແລະຫາ
ລ້ຽງຊີບເຈົ້າດ້ວຍການປະກາດພຣະທຳຢູ່ທີ່ນັ້ນສາ. [13]ຢ່າປະກາດພຣະທຳຢູ່ທີ່ເມືອງເບັດເອນນີ້
ເລີຍ ເພາະວ່າເປັນບ່ອນເຈົ້າຊີວິດນະມັດສະການ ແລະເປັນວິຫານຂອງປະເທດຊາດ."

[14]ອາໂມດຈຶ່ງຕອບວ່າ, "ຂ້ອຍບໍ່ແມ່ນຜູ້ປະກາດພຣະທຳ ແລະການປະກາດພຣະທຳນີ້ບໍ່ແມ່ນ
ໜ້າທີ່ຂອງຂ້ອຍ ຂ້ອຍເປັນຄົນລ້ຽງສັດ ແລະເປັນຜູ້ປູກໝາກເດື່ອເທດເທົ່ານັ້ນ. [15]ແຕ່ວ່າພຣະ-
ຜູ້ເປັນເຈົ້າໄດ້ໃຫ້ຂ້ອຍເຊົາລ້ຽງແກະຊຶ່ງເປັນວຽກຂອງຂ້ອຍ ແລະຊົງໃຫ້ຂ້ອຍໄປເປັນຜູ້ເວົ້າຕໍ່
ພວກອິສຣາເອນໄພ່ພົນຂອງພຣະອົງຕາງພຣະອົງ. [16]ດ້ວຍເຫດນີ້ ຈົ່ງຟັງພຣະຄຳຂອງພຣະຜູ້-
ເປັນເຈົ້າເທີ້ນ ເຈົ້າບອກໃຫ້ຂ້ອຍເຊົາປະກາດພຣະທຳຕໍ່ສູ້ພວກອິສຣາເອນ ແລະບໍ່ໃຫ້ເວົ້າໂຈມຕີ
ເຊື້ອສາຍອີຊາກ. [17]ພຣະຜູ້ເປັນເຈົ້າຊົງກ່າວວ່າ ອາມາຊີຢາເອີຍ ຍ້ອນເຈົ້າໄດ້ເວົ້າດັ່ງນັ້ນ ພັນ
ລະຍາຂອງເຈົ້າຈະກາຍເປັນໂສເພນີໃນເມືອງນີ້ ລູກຊາຍຍິງຂອງເຈົ້າຈະຖືກຂ້າຢູ່ໃນສົງຄາມ
ແລະຜືນແຜ່ນດິນຂອງເຈົ້າຈະຖືກແບ່ງປັນໃຫ້ຄົນອື່ນ ແລ້ວເຈົ້າຈະຕາຍຢູ່ໃນດິນແດນຂອງຄົນ
ນອກສາດສະໜາ ຝ່າຍປະຊາຊົນອິສຣາເອນຈະຖືກເນລະເທດອອກຈາກແຜ່ນດິນຂອງພວກ
ເຂົາ."

# ບົດທີ 8

## ພຣະເຈົ້າຊົງໃຫ້ອາໂມດເຫັນກະຕ່າໝາກໄມ້ ທາງນິມິດ

[1]ພຣະຜູ້ເປັນເຈົ້າຊົງສະແດງໃຫ້ຂ້າພະເຈົ້າເຫັນນິມິດດັ່ງນີ້ ຄືຂ້າພະເຈົ້າໄດ້ເຫັນກະຕ່າໝາກ
ໄມ້. [2]ພຣະຜູ້ເປັນເຈົ້າໄດ້ຊົງກ່າວວ່າ, "ອາໂມດ ເຈົ້າໄດ້ເຫັນຫຍັງ?" ຂ້າພະເຈົ້າຈຶ່ງຕອບວ່າ,
"ກະຕ່າໝາກໄມ້." ພຣະຜູ້ເປັນເຈົ້າຊົງບອກຂ້າພະເຈົ້າວ່າ, "ມື້ສຸດທ້າຍ ຂອງອິສຣາເອນໄພ່

ພົນຂອງເຮົາໝູນວຽນມາຮອດແລ້ວ ເຮົາຈະບໍ່ປ່ຽນພຣະໄທໃນການລົງໂທດພວກເຂົາ. 3ໃນມື້ນັ້ນ
ສຽງຮ້ອງເພງໃນພະລາຊະວັງກໍຈະກາຍເປັນສຽງໂອ່ຍຄາງ ແລະຈະມີຊາກສົບຄົນຕາຍຢູ່ທຸກໆ
ບ່ອນ ແຕ່ຈະບໍ່ມີຜູ້ໃດຈົ່ມເປັນທຸກເສຍໃຈເລີຍ.”

## ພວກອິສຣາເອນຖືກຈິບຫາຍ

4ຈົ່ງຟັງເດີ້ ພວກທີ່ຢຽບຢໍ່າຄົນຂັດສົນ ແລະພະຍາຍາມທຳລາຍຄົນທຸກຍາກຢູ່ໃນປະເທດນີ້.
5ພວກເຈົ້າເວົ້າກັບຕົວເອງວ່າ, “ເພື່ອຈະຂາຍເຂົ້າຂອງເຮົາ ພວກເຮົາເກືອບຈະບໍ່ສາມາດລໍຄອຍ
ຖ້າໃຫ້ໝົດວັນພັກເຫລົ່ານີ້ໄດ້ ຍັງດົນປານໃດວັນພັກຈຶ່ງຈະໝົດໄປ ເພາະວ່າພວກເຮົາຈະເອົາ
ເຂົ້າເບເລ້ອອກໄປຂາຍ ແລ້ວພວກເຮົາຈະຕ້ອງໂກງເອົາລາຄາແພງໆ ແລະໃຊ້ເຄື່ອງຜອງແບບ
ດັດແປງເອົາເອງເພື່ອສໍ້ໂກງຜູ້ມາຊື້. 6ພວກເຮົາຈະຊື້ເອົາຄົນທຸກຍາກມາເປັນທາດໃນລາຄາເທົ່າ
ກັບເກີບຄູ່ດຽວ ແລະພວກເຮົາຈະຂາຍເຂົ້າເບເລ້ທີ່ບໍ່ດີໃນລາຄາແພງໆ.”

7ພຣະຜູ້ເປັນເຈົ້າຂອງພວກອິສຣາເອນ ຊົງກ່າວຢ່າງເດັດຂາດວ່າ, “ເຮົາຈະບໍ່ລືມການກະ-
ທຳອັນຊົ່ວຊ້າຂອງພວກເຂົາ. 8ດັ່ງນັ້ນ ໂລກນີ້ຈະສະທ້ານຫວັ່ນໄຫວ ແຜ່ນດິນຈະພຸ່ງຂຶ້ນແລະ
ເຈື່ອນລົງດັ່ງດຽວກັນກັບແມ່ນໍ້ານິນ ທຸກໆຄົນໃນພື້ນແຜ່ນດິນຈະຕ້ອງໂສກເສົ້າເສຍໃຈ. 9ໃນມື້
ນັ້ນ ເຮົາຈະໃຫ້ຕາເວັນຕົກໃນຕອນທ່ຽງວັນ ແລະໂລກຈະມືດມົວ ເຮົາພຣະຜູ້ເປັນເຈົ້າໄດ້ກ່າວ
ດັ່ງນີ້ແຫລະ. 10ເຮົາຈະໃຫ້ງານສະຫລອງຕ່າງໆກາຍເປັນງານແຫ່ສົບແລະຈະປ່ຽນແປງເພງສະ-
ໜຸກສະໜານໃຫ້ເປັນສຽງຮ້ອງໄຫ້ທີ່ໂສກເສົ້າເສຍໃຈ ເຮົາຈະໃຫ້ພວກເຈົ້ານຸ່ງເຄື່ອງໄວ້ທຸກ ແລະ
ແຖຜົມ ພວກເຈົ້າຈະເປັນເໝືອນດັ່ງພໍ່ແມ່ທີ່ເສົ້າເສຍໃຈນຳລູກຊາຍໂທນທີ່ຕາຍໄປ ໃນມື້ນັ້ນຈະມີ
ແຕ່ຄວາມຂົມຂື່ນຕະຫລອດໄປ.

11ເວລາທີ່ເຮົາຈະໃຫ້ການອຶດຢາກເກີດຂຶ້ນໃນແຜ່ນດິນກໍເຂົ້າມາໃກ້ແລ້ວ ປະຊາຊົນຈະອຶດ
ຢາກ ແຕ່ບໍ່ແມ່ນຫິວເຂົ້າຈີ່ ຫລືນໍ້າ ພວກເຂົາຈະອຶດຫິວພຣະຄຳທີ່ມາຈາກພຣະເຈົ້າ ເຮົາ
ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ແຫລະ. 12ປະຊາຊົນຈະທ່ອງທ່ຽວໄປມາຢ່າງອິດເມື່ອຍແຕ່ເໜືອ
ຕະຫລອດໃຕ້ ຈາກທິດຕາເວັນອອກຈົນເຖິງທິດຕາເວັນຕົກ ທັງທຸກທີ່ທຸກບ່ອນ ເພື່ອຊອກຫາ
ພຣະຄຳທີ່ມາຈາກພຣະຜູ້ເປັນເຈົ້າ ແຕ່ພວກເຂົາຈະບໍ່ພົບ. 13ໃນມື້ນັ້ນ ຜູ້ສາວທີ່ສວຍງາມ ແລະ
ຊາຍໜຸ່ມທັງຫລາຍຈະລົ້ມສະຫລົບລົງຍ້ອນການຫິວນໍ້າ. 14ສ່ວນຜູ້ທີ່ສາບານດ້ວຍຮູບເຄົາລົບ
ຂອງກຸງຊາມາເຣຍທີ່ກ່າວໃນນາມພະຂອງເມືອງດານ ຫລືໃນນາມພະຂອງເມືອງເບເອ-ເຊບາ
ປະຊາຊົນເຫລົ່ານີ້ຈະຈິບຫາຍໝົດ.”

# ບົດທີ 9

## ພຣະຜູ້ເປັນເຈົ້າຊົງຕັດສິນພວກອິສຣາເອນ

1ຂ້າພະເຈົ້າໄດ້ເຫັນພຣະຜູ້ເປັນເຈົ້າຊົງຢືນຢູ່ຂ້າງແທ່ນບູຊາ ພຣະອົງຊົງສັ່ງວ່າ, “ຈົ່ງທຸບຕີ
ຍອດເສົາວິຫານ ເພື່ອໃຫ້ທົ່ວທັງລະບຽງສະທ້ານຫວັ່ນໄຫວ ແລະໃຫ້ເສົາຫັກລົງເປັນທ່ອນໆທັບ
ຫົວປະຊາຊົນ ສ່ວນເຮົາຈະຂ້າທຸກໆຄົນທີ່ເຫລືອໃນສະໜາມຮົບ ໂດຍບໍ່ໃຫ້ຜູ້ໜຶ່ງຜູ້ໃດແລ່ນປົບ
ໜີໄປໄດ້. 2ເຖິງວ່າພວກເຂົາຈະຂຸດຄົ້ນຊ່ອງທາງໄປສູ່ພິພົບຄົນຕາຍ ເຮົາກໍຈະລັດຈັບເອົາພວກ

ເຂົາຄືນມາ ຖ້າພວກເຂົາຂຶ້ນເມືອເມືອງສະຫວັນຊັ້ນຟ້າເຮົາກໍຈະດຶງລົງມາ. [3]ຖ້າວ່າພວກເຂົາຈະ
ລີ້ຢູ່ເທິງຍອດພູກາເມນ ເຮົາກໍຈະຄົ້ນຫາ ແລະຈັບເອົາເຂົາມາ ເຖິງຖ້າວ່າພວກເຂົາລີ້ຢູ່ພື້ນນໍ້າ
ທະເລ ເຮົາກໍຈະສົ່ງນາກໃນທະເລກັດກິນພວກເຂົາ. [4]ແລະຖ້າວ່າພວກເຂົາເປັນຊະເລີຍເສິກ
ຂອງສັດຕູ ເຮົາກໍຈະອອກຄຳສັ່ງໃຫ້ສັດຕູຂ້າພວກເຂົາ ເຮົາໄດ້ຕັດສິນໃຈທຳລາຍພວກເຂົາ
ແລະບໍ່ໄດ້ຊ່ອຍເຫລືອພວກເຂົາ.”

[5] ພຣະເຈົ້າແຫ່ງຈັກກະວານໄດ້ແຕະຕ້ອງແຜ່ນດິນໂລກໃຫ້ເຈື່ອນເພພັງລົງ
  ແຜ່ນດິນຈະພຸ່ງຂຶ້ນ ແລະເຈື່ອນລົງດັ່ງດຽວກັນກັບແມ່ນໍ້ານິນ
ທຸກໆຄົນທີ່ອາໄສຢູ່ກໍໂສກເສົ້າເສຍໃຈ.
[6] ພຣະຜູ້ເປັນເຈົ້າຊົງສ້າງພະລາຊະວັງຂອງພຣະອົງຢູ່ເທິງສະຫວັນ
  ແລະໃຫ້ວົງໂຄ້ງຂອງທ້ອງຟ້າກວມໂລກຢູ່
ພຣະອົງຊົງເອີ້ນເອົານໍ້າຂຶ້ນມາຈາກທະເລ
  ແລະຊົງຖອກເທນໍ້ານັ້ນລົງເທິງແຜ່ນດິນໂລກ
ພຣະອົງຊົງພຣະນາມວ່າພຣະຜູ້ເປັນເຈົ້າ.

[7]ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ຊາວອິສຣາເອນເອີຍ ເຮົາໄດ້ປະຕິບັດຕໍ່ພວກເຈົ້າດັ່ງໄດ້ປະ-
ຕິບັດຕໍ່ພວກເອທີໂອເປຍ ເຮົາໄດ້ພາພວກຟີລິດສະຕິນອອກຈາກເກາະຄັບໂຕ ແລະພາພວກຊີ-
ເຣຍອອກຈາກເມືອງກີເຣ ດັ່ງດຽວກັນກັບທີ່ເຮົາໄດ້ນຳພວກເຈົ້າອອກຈາກປະເທດເອຢິບ. [8]ເຮົາ
ກຳລັງສັງເກດເບິ່ງລາຊະອານາຈັກອິສຣາເອນ ທີ່ເຕັມໄປດ້ວຍຄວາມບາບ ແລະຈະທຳລາຍມັນ
ແຕ່ວ່າຈະບໍ່ທຳລາຍໝົດຈາກແຜ່ນດິນໂລກນີ້.”

[9]ຍ້ອນຄຳສັ່ງຂອງເຮົາ ເຮົາຈະຮ່ອນພວກອິສຣາເອນໃຫ້ກະຈັດກະຈາຍຢູ່ທ່າມກາງຊົນຊາດ
ຕ່າງໆ ເໝືອນຮ່ອນເຂົ້າຢູ່ໃນກະດົ້ງເຂີງ ເພື່ອແຍກຜູ້ທີ່ບໍ່ມີຄຸນຄ່າອອກ [10]ຜູ້ທີ່ເຮັດຜິດຢູ່ທ່າມ-
ກາງປະຊາຊົນຂອງເຮົາ ທີ່ຍັງເວົ້າວ່າ ພຣະເຈົ້າຈະບໍ່ໃຫ້ໄພອັນຕະລາຍຢ່າງໃດມາໃກ້ພວກເຮົາ
ຄົນເຫລົ່ານີ້ຈະຕ້ອງຖືກຂ້າ.

## ພຣະເຈົ້າຊົງສ້າງລາຊະອານາຈັກອິສຣາເອນຂຶ້ນໃໝ່ໃນອະນາຄົດ

[11]ໃນມື້ນັ້ນ ເຮົາຈະສ້າງຄອບຄົວດາວິດ ຊຶ່ງເປັນເໝືອນກັບເຮືອນທີ່ຮ້າງເພພັງຂຶ້ນໃໝ່ ເຮົາ
ຈະແປງຝາເຮືອນນັ້ນ ແລະສ້າງເຮືອນໃຫ້ມີສະພາບຄືແຕ່ກ່ອນ [12]ດັ່ງນັ້ນ ພວກອິສຣາເອນຈະ
ໄດ້ຍຶດຄອງພວກທີ່ຍັງເຫລືອຢູ່ໃນປະເທດເອໂດມ ແລະຊົນຊາດອື່ນໆ ທີ່ເປັນຝ່າຍເຮົາມາກ່ອນ
ພຣະຜູ້ເປັນເຈົ້າຜູ້ຊົງໃຫ້ສິ່ງນີ້ບັງເກີດຂຶ້ນມາ ໄດ້ກ່າວໄວ້ດັ່ງນີ້ແຫລະ.

[13] ພຣະຜູ້ເປັນເຈົ້າຊົງກ່າວວ່າ “ມື້ນັ້ນກຳລັງຈະມາ
  ເມື່ອຊາວນາໄຖນາໃນຂະນະທີ່ຄົນພວກອື່ນຍັງກຳລັງເກັບກ່ຽວຢູ່
ແລະຜູ້ທີ່ບີບເອົານໍ້າອະງຸ່ນກໍກຳລັງບີບຢູ່
  ໃນເວລາທີ່ຜູ້ຫວ່ານເຂົ້າເລີ່ມຕົ້ນຫວ່ານໃໝ່
ນໍ້າອະງຸ່ນຈະຍ້ອຍລົງຈາກພູເຂົາ
  ແລະຈະໄຫລລົງຈາກພູນ້ອຍ.

14 ເຮົາຈະນຳເອົາປະຊາຊົນຂອງເຮົາກັບຄືນສູ່ແຜ່ນດິນຂອງພວກເຂົາ
ພວກເຂົາຈະກໍ່ສ້າງເມືອງຮ້າງຂຶ້ນໃໝ່ແລະອາໄສຢູ່ທີ່ນັ້ນ
ຈະເຮັດສວນອະງຸ່ນ ແລະດື່ມເຫລົ້າອະງຸ່ນ
ຈະເຮັດສວນ ແລະກິນຜົນລະປູກນັ້ນ.
15 ເຮົາຈະປູກພວກເຂົາໄວ້ໃນແຜ່ນດິນທີ່ເຮົາໃຫ້ແກ່ພວກເຂົາ
ແລະພວກເຂົາຈະບໍ່ຖືກຫລົກອອກອີກຈັກເທື່ອ
ພຣະຜູ້ເປັນເຈົ້າຂອງພວກເຈົ້າຊົງກ່າວໄວ້ດັ່ງນີ້ແຫລະ.

* * *

# ໂອບາດີຢາ

## ຄວາມຈິບຫາຍຈະມາເຖິງເມືອງເອໂດມ

1ນິມິດຂອງ ໂອບາດີຢາ ອົງພຣະຜູ້ເປັນເຈົ້າ ພຣະເຈົ້າກ່າວເຖິງ ເອໂດມວ່າດັ່ງນີ້: "ເຮົາໄດ້
ຍິນຂ່າວຈາກພຣະຜູ້ເປັນເຈົ້າ ລາຊະທູດໄດ້ຖືກຮັບໃຊ້ໄປໃນທ່າມກາງພວກຕ່າງຊາດໃຫ້ເວົ້າວ່າ
"ຈົ່ງລຸກຂຶ້ນໄປເຮັດເສິກຕໍ່ສູ້ ເອໂດມ" 2ເບິ່ງແມ ເຮົາໄດ້ສ້າງໃຫ້ເຈົ້າເປັນພວກນ້ອຍໃນທ່າມກາງ
ພວກຕ່າງຊາດ ໃຫ້ເຈົ້າຖືກໝິ່ນປະໝາດຫລາຍ 3ຈິດໃຈຈອງຫອງຂອງພວກເຈົ້າໄດ້ຫລອກລວງ
ພວກເຈົ້າເອງ ເຈົ້າຜູ້ຊຶ່ງອາໄສຢູ່ບ່ອນທີ່ສູງໃນໂງ່ນຫີນ ເຈົ້າຄິດຢູ່ໃນໃຈວ່າ "ໃຜຈະດຶງຂ້ອຍລົງ-
ພື້ນດິນໄດ້?" 4ພຣະຜູ້ເປັນເຈົ້າຊົງກ່າວວ່າ "ຖ້າເຈົ້າບິນເວີ່ນຂຶ້ນໄປສູງເໝືອນນົກອິນຊີ ແລະຖ້າ
ເຈົ້າເຮັດຮັງຂອງເຈົ້າໄດ້ໃນທ່າມກາງບັນດາດວງດາວທັງຫລາຍ, ເຮົາຈະເອົາເຈົ້າລົງມາຈາກ
ບ່ອນນັ້ນ 5ຖ້າຂີ້ລັກເຂົ້າມາໃນເຮືອນຂອງເຈົ້າ, ຖ້າພວກປຸ້ນເຂົ້າມາໃນຕອນກາງຄືນ (ເຈົ້າຈະ
ຈິບຫາຍຫລາຍເທົ່າໃດນໍ) ພວກເຂົາຈະບໍ່ລັກເອົາສຳລັບຕົວຂອງພວກເຂົາເທົ່ານັ້ນບໍ? ຖ້າຄົນ
ເກັບໝາກອະງຸ່ນໃນສວນຂອງເຈົ້າ ລາວຈະບໍ່ປະໝາກອະງຸ່ນໃຫ້ເຫຼືອໄວ້ແດ່ບໍ? 6ເອຊາວໄດ້ຖືກ
ການຮ້າຍແຮງແລ້ວຢ່າງໃດນໍ! ຊັບສົມບັດທີ່ເຊື່ອງໄວ້ກໍຖືກປຸ້ນເອົາໄປໝົດ 7ຄົນທັງຫຼາຍທີ່ໄດ້
ສັນຍາກັບເຈົ້າກໍໄດ້ຊຸກເຈົ້າໄປເຖິງເຂດແດນ, ຄົນທັງຫຼາຍທີ່ເປັນມິດກັບເຈົ້າກໍໄດ້ຫລອກລວງ
ເຈົ້າ ພວກເຂົາຕໍ່ສູ້ ແລະໄດ້ຊະນະເຈົ້າແລ້ວ, ເພື່ອນມິດທັງຫຼາຍທີ່ໄດ້ກິນເຂົ້າຈີ່ຂອງເຈົ້າ ກໍເອົາ
ບ້ວງແຮ້ວມາຫ້າງດັກໄວ້ຢູ່ລຸ່ມຕົວເຈົ້າ ເລື່ອງນີ້ບໍ່ມີໃຜເຂົ້າໃຈເພິ່ນເລີຍ" 8ພຣະຜູ້ເປັນເຈົ້າກ່າວ
ວ່າ "ເຮົາຈະບໍ່ທຳລາຍຄົນສະຫລາດໃຫ້ໝົດໄປຈາກ ເອໂດມ ແລະທຳລາຍຄວາມ ເຂົ້າໃຈຈາກ
ພູເຂົາ ເອຊາວ ໃນມື້ນັ້ນບໍ?" 9ໂອ ເຕມານ ເອີຍ ຊາຍສະກັນຂອງເຈົ້າຈະຕົກໃຈ ເມື່ອທຸກຄົນທີ່
ມາຈາກພູເຂົາ ເອຊາວ ຈະຖືກຂ້າຕາຍ

## ຄວາມບາບຂອງເອໂດມຕໍ່ອິສຣາເອນ

10ຍ້ອນເຈົ້າໄດ້ເຮັດທາລຸນແກ່ຢາໂຄບນ້ອງຊາຍຂອງເຈົ້າ ຄວາມອັບອາຍຈະຄຸມເຈົ້າໄວ້
ແລະເຈົ້າຈະຕ້ອງຖືກຕັດຂາດອອກໄປເປັນນິດ 11ໃນມື້ທີ່ເຈົ້າຢືນເປັນສັດຕູ, ໃນຂະນະທີ່ຄົນຕ່າງ
ດ້າວເອົາຊັບສິນຂອງເມືອງໄປ ແລະຄົນຕ່າງຊາດເຂົ້າມາທາງປະຕູເມືອງ ພວກເຂົາຈັບສະ-
ຫລາກຢູ່ເທິງເມືອງ ເຢຣູຊາເລັມ ພວກເຈົ້າກໍໄດ້ເຮັດເໝືອນກັບຄົນເຫລົ່ານັ້ນ 12ແຕ່ເຈົ້າບໍ່ຄວນ
ຍິ້ມພໍໃຈທີ່ໄດ້ເບິ່ງມື້ນັ້ນ ຄືມື້ທີ່ນ້ອງຊາຍຂອງເຈົ້າໄດ້ຮັບເຄາະຮ້າຍ ແລະ ບໍ່ສົມຄວນທີ່ຈະປິຕິ-
ຍິນດີຍ້ອນລູກຫລານຢູດາ ໃນເມື່ອພວກເຂົາຖືກທຳລາຍໃຫ້ຈິບຫາຍ ເຈົ້າບໍ່ຄວນຈະເວົ້າໂອ້
ອວດໃນມື້ທີ່ພວກເຂົາຕົກທຸກໄດ້ຍາກ 13ເຈົ້າບໍ່ຄວນຜ່ານເຂົ້າປະຕູເມືອງແຫ່ງປະຊາຊົນຂອງເຮົາ
ໃນມື້ທີ່ພວກເຂົາຖືກທຳລາຍ ພວກເຈົ້າບໍ່ຄວນຢືນຍິ້ມເບິ່ງຄວາມທຸກຍາກຂອງພວກເຂົາໃນມື້ທີ່
ພວກເຂົາຖືກເຄາະຮ້າຍ ພວກເຈົ້າບໍ່ຄວນຍື່ນມືຈັບເອົາຊັບສິນຂອງພວກເຂົາໃນມື້ທີ່ພວກເຂົາຖືກ
ເຫດຮ້າຍອັນຕະລາຍ 14ເຈົ້າບໍ່ຄວນຢືນຢູ່ທາງແຍກຂອງພວກເຂົາ ເພື່ອຈະດັກຈັບພວກເຂົາທີ່
ຫລົບໜີ, ເຈົ້າບໍ່ຄວນມອບຜູ້ທີ່ລອດພົ້ນມາໄດ້ນັ້ນ ໃຫ້ແກ່ສັດຕູຂອງພວກເຂົາໃນມື້ທີ່ພວກເຂົາ

ຕົກທຸກໄດ້ຍາກ

## ການທຳລາຍເອໂດມ ປຽບເໝືອນກັບວັນຂອງພຣະຜູ້ເປັນເຈົ້າໃນອະນາຄົດ

[15]ເພາະວ່າວັນຂອງ ພຣະຜູ້ເປັນເຈົ້າ ສຳລັບພວກຕ່າງຊາດໄດ້ໃກ້ເຂົ້າມາແລ້ວ ຖ້າເຈົ້າຈະເຮັດ
ສິ່ງໃດແກ່ພວກເຂົາ ເຈົ້າກໍຈະຖືກການນັ້ນ ລາງວັນແຫ່ງການຕອບແທນຂອງເຈົ້າ ຈະກັບມາຕົກ
ໃສ່ເທິງຫົວຂອງເຈົ້າເອງ [16]ເຫດວ່າພວກເຈົ້າໄດ້ດື່ມຢູ່ເທິງພູເຂົາບໍລິສຸດຂອງເຮົາຢ່າງໃດ ພວກ
ຕ່າງຊາດທັງປວງກໍຈະດື່ມຢ່າງນັ້ນໂດຍບໍ່ຢຸດເຊົາ ຈະດື່ມສືບໆໄປ ພວກເຂົາຈະດື່ມ ແລະກືນ
ແລ້ວພວກເຂົາຈະເປັນເໝືອນກັບທີ່ບໍ່ເຄີຍເປັນມາກ່ອນ [17]ແລະຢູ່ເທິງພູເຂົາຊີໂອນ ຈະມີຄວາມ
ພົ້ນ ພູນັ້ນຈະບໍລິສຸດ ແລະຄອບຄົວຂອງຢາໂຄບ ຈະໄດ້ຮັບທີ່ດິນນັ້ນເປັນກຳມະສິດຂອງພວກ
ເຂົາ [18]ຄອບຄົວຂອງຢາໂຄບ ຈະເປັນໄຟ ຄອບຄົວຂອງໂຢເຊັບ ຈະເປັນແປວໄຟ ແລະຄອບຄົວ
ຂອງເອຊາວ ຈະເປັນຕໍເຟືອງ ພວກເຂົາຈະດັງໄຟຈູດຕໍເຟືອງນັ້ນ ບໍ່ມີສິ່ງໃດຍັງເຫຼືອຢູ່ໃນຄອບ-
ຄົວຂອງເອຊາວ ເພາະວ່າ ພຣະຜູ້ເປັນເຈົ້າ ໄດ້ບອກໄວ້ກ່ອນແລ້ວ [19]ຄົນທັງຫລາຍທີ່ຢູ່ໃນພາກ
ໃຕ້ຈະໄດ້ພູເຂົາຂອງເອຊາວ ເປັນກຳມະສິດ ຄົນເຫລົ່ານັ້ນທີ່ຢູ່ໃນທົ່ງພຽງ ຈະໄດ້ແຜ່ນດິນ ຟີລິດ-
ສະຕິນ ພວກເຂົາຈະໄດ້ແຜ່ນດິນ ເອຟຣາຢິມ ແລະແຜ່ນດິນຊາມາເຣຍ ເປັນກຳມະສິດ ແລະ
ເບັນຢາມິນ ຈະໄດ້ ກີເລອາດ ເປັນກຳມະສິດ [20]ຜູ້ທີ່ຖືກກວາດໄປຈາກກອງທັບລູກຫຼານຂອງ ອິ-
ສຣາເອນ ທີ່ເປັນຊະເລີຍ ຈະໄດ້ແຜ່ນດິນຊຶ່ງເປັນຂອງຄົນ ການາອານ ໄກໄປຈົນຮອດຊາເຣຟັດ
ເປັນກຳມະສິດ, ສ່ວນພວກຊະເລີຍຊາວ ເຢຣູຊາເລັມ ທີ່ຢູ່ໃນ ເສຟາຣາດ ຈະໄດ້ຫົວເມືອງໃນ
ພາກໃຕ້ເປັນກຳມະສິດ [21]ແລະພວກຜູ້ຊ່ວຍທັງຫລາຍຈະຂຶ້ນໄປເທິງພູເຂົາຊີໂອນ ເພື່ອຕັດສິນພູ-
ເຂົາຂອງເອຊາວ ແລະລາຊະອານາຈັກນັ້ນຈະເປັນຂອງ ພຣະຜູ້ເປັນເຈົ້າ

* * *

# ໂຢນາ

## ບົດທີ 1

### ໂຢນາບໍ່ເຊື່ອຟັງພຣະຜູ້ເປັນເຈົ້າ

1-2ພຣະຜູ້ເປັນເຈົ້າ ຊົງບອກ ໂຢນາ ວ່າ, “ຈົ່ງຕຽມຕົວໄປຍັງມະຫານະຄອນ ນີເນເວ ເພື່ອ
ຕັກເຕືອນໃຫ້ຊາວນະຄອນນັ້ນຮູ້ວ່າ ເຮົາຮູ້ເຫັນການປະພຶດຊົ່ວຂອງພວກເຂົາແລ້ວ.” 3ແຕ່ແທນ
ທີ່ ໂຢນາ ຈະປະຕິບັດຕາມພຣະດຳລັດນັ້ນ ລາວກັບໜີໄປຍັງ ເມືອງ ຕາຊິດ ເພື່ອຈະໃຫ້ພົ້ນຈາກ
ພຣະພັກ ພຣະຜູ້ເປັນເຈົ້າ ຄືລາວໄດ້ລົງໄປຍັງ ເມືອງ ຢົບປາ ໃນທີ່ນັ້ນລາວໄດ້ພົບເຮືອລຳໜຶ່ງທີ່
ຈະແລ່ນໄປຍັງ ເມືອງ ຕາຊິດ ລາວຈຶ່ງເສຍຄ່າໂດຍສານ ແລະລົງໄປໃນເຮືອ ເດີນທາງໄປຍັງ
ເມືອງ ຕາຊິດ ກັບພວກລູກເຮືອ. 4ແຕ່ ພຣະຜູ້ເປັນເຈົ້າ ໄດ້ຊົງບັນດານ ໃຫ້ເກີດລົມພະຍຸໃຫຍ່ພັດ
ຜ່ານທະເລ ຈົນເຮືອລຳນັ້ນເກືອບແຕກຈົມລົງ. 5ບັນດາລູກເຮືອເກີດຄວາມຕົກໃຈ ຕ່າງຄົນຈຶ່ງ
ຮ້ອງຂໍໃຫ້ພະຂອງໃຜລາວມາຊ່ອຍເຫລືອ ແລະຕ່າງຄົນກໍຂົນສິນຄ້າທີ່ບັນທຸກມານັ້ນຖິ້ມລົງໃນ
ທະເລ ເພື່ອໃຫ້ເຮືອເບົາລົງ ສ່ວນ ໂຢນາ ໄດ້ລົງໄປນອນຫລັບຢູ່ໃນຫ້ອງເຮືອ.

6ນາຍເຮືອຈຶ່ງລົງໄປຫາລາວ ແລະເວົ້າວ່າ, “ເປັນຫຍັງເຈົ້າຈຶ່ງຍັງນອນຫລັບຢູ່? ຈົ່ງລຸກຂຶ້ນ
ມາຮ້ອງຫາ ພຣະເຈົ້າ ຂອງ ເຈົ້າ ໃຫ້ຊ່ອຍເຫລືອ ບາງທີເພິ່ນຈະຊົງພຣະກະລຸນາ ແລະພວກເຮົາກໍ
ຈະບໍ່ຕາຍ.”

7ຕໍ່ມາ ພວກລູກເຮືອໄດ້ຊັກຊວນກັນຈົກສະຫລາກ ເພື່ອຢາກຈະຮູ້ວ່າໃຜເປັນຕົ້ນເຫດໃຫ້ເກີດ
ໄພອັນຕະລາຍນີ້ ທຸກຄົນຈຶ່ງເຫັນດີ ເມື່ອຈົກສະຫລາກຂຶ້ນມາກໍຖືກຊື່ ໂຢນາ. 8ພວກເຂົາຈຶ່ງຖາມ
ໂຢນາ ວ່າ, “ບັດນີ້ ຂໍຈົ່ງບອກໃຫ້ພວກເຮົາຮູ້ວ່າ ແມ່ນໃຜເປັນຕົ້ນເຫດໃນການນີ້? ເຈົ້າມາຈາກ
ໃສ? ເປັນຄົນຊາດໃດ? ປະເທດຂອງເຈົ້າຊື່ຫຍັງ? ແລະເຈົ້າມານີ້ເພື່ອກິດທຸລະຫຍັງ?” 9ລາວ
ໄດ້ຕອບວ່າ, “ຂ້ອຍເປັນຄົນຊາດ ເຮັບເຣີ ທີ່ນັບຖື ພຣະຜູ້ເປັນເຈົ້າ ຜູ້ສະຖິດຢູ່ສະຫວັນຊັ້ນຟ້າ ຜູ້
ຊົງສ້າງທະເລ ແລະແຜ່ນດິນ.” 10ເມື່ອ ໂຢນາ ເວົ້າດັ່ງນັ້ນ ພວກລູກເຮືອກໍຕົກໃຈຢ່າງໃຫຍ່ ຈຶ່ງ
ເວົ້າໃສ່ລາວວ່າ, “ເປັນຫຍັງເຈົ້າຈຶ່ງເຮັດຜິດຢ່າງໃຫຍ່ຫລວງປານນີ້?” (ການທີ່ເວົ້າຢ່າງນີ້ກໍເພາະ
ພວກເຂົາຮູ້ແລ້ວ ເລື່ອງທີ່ລາວໄດ້ໜີຈາກພຣະພັກ ພຣະຜູ້ເປັນເຈົ້າ).

11ເມື່ອລົມພະຍຸພັດແຮງຂຶ້ນເລື້ອຍໆ ພວກລູກເຮືອກໍຖາມ ໂຢນາ ວ່າ, “ເຮົາຈະເຮັດແນວໃດ
ກັບເຈົ້າ ລົມພະຍຸຈຶ່ງຈະສະຫງົບລົງ?” 12ໂຢນາ ຕອບວ່າ, “ໃຫ້ຈັບຂ້ອຍຖິ້ມລົງທະເລສາ ແລ້ວ
ລົມພະຍຸກໍຈະສະຫງົບລົງ ເພາະຂ້ອຍຮູ້ຢູ່ແລ້ວວ່າ ແມ່ນຂ້ອຍເອງເປັນຕົ້ນເຫດທີ່ພາໃຫ້ເກີດລົມ
ຮ້າຍ.” 13ພວກລູກເຮືອໄດ້ພ້ອມກັນພາຍເຮືອເຂົ້າມາຝັ່ງຢ່າງເຕັມກຳລັງແຕ່ກໍບໍ່ສຳເລັດ ເພາະລົມ
ພະຍຸຍິ່ງພັດແຮງຂຶ້ນເລື້ອຍໆ. 14ເມື່ອເປັນດັ່ງນັ້ນ ພວກລູກເຮືອກໍຮ້ອງໄຫ້ວອນຕໍ່ ພຣະຜູ້ເປັນ-
ເຈົ້າ ວ່າ, “ຂ້າແດ່ ພຣະຜູ້ເປັນເຈົ້າ ໃນການທີ່ຈະຂ້າຄົນຜູ້ນີ້ ຂໍພຣະອົງຢ່າລົງໂທດພວກຂ້ານ້ອຍ
ເຖິງຕາຍທ້ອນ ດ້ວຍເຫດວ່າພຣະອົງເອງທີ່ສຳແດງໃຫ້ພວກຂ້ານ້ອຍເຮັດແນວນີ້.” 15ແລ້ວພວກ
ເຂົາກໍຈັບ ໂຢນາ ຖິ້ມລົງທະເລ ຄວາມປັ່ນປ່ວນໃນນ້ຳທະເລກໍສະຫງົບລົງທັນທີ.

16ເມື່ອເປັນດັ່ງນັ້ນ ພວກເຂົາກໍຢ້ານກົວພຣະຜູ້ເປັນເຈົ້າຫລາຍທີ່ສຸດ ຈຶ່ງພ້ອມກັນນ້ອມຖວາຍ
ເຄື່ອງບູຊາ ແລະກ່າວຄຳປະຕິຍານຕົນຕໍ່ພຣະອົງ. 17ຝ່າຍພຣະຜູ້ເປັນເຈົ້າຈຶ່ງຊົງສັ່ງປາໃຫຍ່ໃຫ້
ກືນກິນໂຢນາ ລາວຈຶ່ງຢູ່ໃນທ້ອງປານັ້ນເປັນເວລາສາມມື້ສາມຄືນ.

# ບົດທີ 2

## ໂຢນາອ້ອນວອນຂອບພຣະຄຸນພຣະຜູ້ເປັນເຈົ້າ

1ໃນຂະນະທີ່ໂຢນາຢູ່ໃນທ້ອງປານັ້ນ ລາວໄດ້ກ່າວຂອບພຣະຄຸນພຣະຜູ້ເປັນເຈົ້າຂອງລາວ
ວ່າ:

2 ຂ້າແດ່ພຣະຜູ້ເປັນເຈົ້າ ໃນຄາວຂ້ານ້ອຍຖືກທໍລະມານ
ຂ້ານ້ອຍໄດ້ຮ້ອງຂໍໃຫ້ພຣະອົງຊ່ອຍ
ແລະພຣະອົງກໍຊົງຕອບຂ້ານ້ອຍ
ຂ້ານ້ອຍຮ້ອງຂໍຄວາມຊ່ອຍເຫລືອຈາກບ່ອນເລິກ
ໃນພິພົບຄົນຕາຍ
ພຣະອົງກໍຊົງໄດ້ຍິນສຽງຂອງຂ້ານ້ອຍ.
3 ພຣະອົງຊົງໂຍນຂ້ານ້ອຍລົງໄປ
ເຖິງພື້ນທະເລເລິກ
ຢູ່ທີ່ນັ້ນນໍ້າໄດ້ຖ້ວມຂ້ານ້ອຍ
ຄື້ນອັນຮ້າຍແຮງທັງປວງຂອງພຣະອົງ
ໄດ້ຕີກະທົບຂ້ານ້ອຍແລ້ວ.
4 ຂ້ານ້ອຍຈຶ່ງທູນວ່າ ຂ້ານ້ອຍຖືກປັດເຊ່ຍ
ອອກຈາກພຣະພັກຂອງພຣະອົງ
ຂ້ານ້ອຍຈະບໍ່ເຫັນພຣະວິຫານສັກສິດຂອງພຣະອົງອີກ.
5 ນໍ້າໄດ້ຖ້ວມຂ້ານ້ອຍ ແລະຂ້ານ້ອຍຫາຍໃຈບໍ່ໄດ້
ນໍ້າທະເລໄດ້ໂອບຕົວຂ້ານ້ອຍໝົດສິ້ນ
ແລະເທົາກໍພັນຫົວຂ້ານ້ອຍຢູ່.
6 ຂ້ານ້ອຍໄດ້ລົງໄປເຖິງຕີນພູ
ລົງໄປເຖິງດິນບ່ອນທີ່ມີປະຕູອັດໄວ້ຕະຫລອດໄປ
ຂ້າແດ່ພຣະຜູ້ເປັນເຈົ້າຂອງຂ້ານ້ອຍ ແຕ່ພຣະອົງຊົງນຳ
ຂ້ານ້ອຍຂຶ້ນມາຈາກບ່ອນເລິກນັ້ນໂດຍຍັງມີຊີວິດຢູ່.
7 ຂ້າແດ່ພຣະຜູ້ເປັນເຈົ້າ ເມື່ອຊີວິດຂອງຂ້ານ້ອຍສະຫລົບໄປ
ຂ້ານ້ອຍກໍລະນຶກເຖິງພຣະອົງ
ແລະຄຳອ້ອນວອນຂອງຂ້ານ້ອຍກໍມາເຖິງພຣະອົງ
ເຂົ້າສູ່ພຣະວິຫານສັກສິດຂອງພຣະອົງ.

[8] ຄົນທັງຫລາຍທີ່ຂາບໄຫວ້ຮູບພະອັນບໍ່ມີປະໂຫຍດ
ໄດ້ປະຖິ້ມຄວາມຈົ່ງຮັກພັກດີທີ່ມີຕໍ່ພຣະອົງເສຍ.
[9] ແຕ່ຂ້ານ້ອຍຈະຮ້ອງເພງສັນລະເສີນພຣະອົງ
ຂ້ານ້ອຍຈະຖວາຍສັດບູຊາແດ່ພຣະອົງ
ຈະກະທຳຕາມສິ່ງທີ່ຂ້ານ້ອຍໄດ້ສັນຍາໄວ້
ຄວາມລອດພົ້ນມາຈາກພຣະຜູ້ເປັນເຈົ້າ!"
[10]ແລ້ວພຣະຜູ້ເປັນເຈົ້າຊົງສັ່ງໃຫ້ປາໃຫຍ່ໂຕນັ້ນຂຶ້ນມາຄາຍໂຢນາໄວ້ແຄມຫາດຊາຍ.

# ບົດທີ 3

## ໂຢນາໃນນະຄອນນີເນເວ

[1-2]ຕໍ່ມາ ພຣະຜູ້ເປັນເຈົ້າຊົງບອກໂຢນາອີກວ່າ, "ຈົ່ງຕຽມຕົວໄປຍັງມະຫານະຄອນນີເນເວ
ເພື່ອປະກາດໃຫ້ຊາວນະຄອນນັ້ນຮູ້ຄຳທີ່ເຮົາໄດ້ບອກເຈົ້າ." [3]ໃນເທື່ອນີ້ ໂຢນາໄດ້ເຮັດຕາມ
ພຣະຜູ້ເປັນເຈົ້າຊົງສັ່ງ ຄືໄດ້ຕຽມຕົວອອກເດີນທາງໄປຍັງນະຄອນນີເນເວທັນທີ ນະຄອນນີ້
ເປັນເມືອງໃຫຍ່ຫລາຍ ຕ້ອງໃຊ້ເວລາຍ່າງເຖິງສາມມື້ຈຶ່ງຈະພົ້ນຕົວເມືອງ. [4]ໂຢນາໄດ້ຕັ້ງຕົ້ນ
ຍ່າງເຂົ້າໄປໃນນະຄອນນັ້ນເປັນໄລຍະທາງໜຶ່ງມື້ ແລ້ວໄດ້ຮ້ອງປະກາດວ່າ, "ອີກສີ່ສິບມື້ ນະ-
ຄອນນີເນເວກໍຈະຖືກທຳລາຍ!" [5]ປະຊາຊົນຊາວນະຄອນນີເນເວກໍເຊື່ອຟັງພຣະເຈົ້າ ພວກເຂົາ
ໄດ້ປະກາດໃຫ້ທຸກໆຄົນ ທັງຄົນຊັ້ນສູງ ແລະຄົນຊັ້ນຕໍ່າ ອົດອາຫານ ແລະນຸ່ງຫົ່ມເຄື່ອງໄວ້ທຸກ
ເພື່ອເປັນການສະແດງວ່າ ພວກເຂົາທັງໝົດໄດ້ເຊື່ອຟັງພຣະເຈົ້າແລ້ວ.
[6]ເມື່ອກະສັດແຫ່ງນະຄອນນີເນເວຊົງຊາບເຫດການນີ້ ກໍຊົງລຸກຂຶ້ນຈາກບັນລັງ ຊົງແກ້
ເຄື່ອງນຸ່ງອອກ ຊົງໃສ່ເຄື່ອງນຸ່ງໄວ້ທຸກແທນ ແລະຊົງນັ່ງເທິງຂີ້ເທົ່າໄຟ. [7]ແລ້ວພະອົງໄດ້ມີພະ
ລາຊະດຳລັດປະກາດໃຫ້ຊາວນະຄອນນີເນເວຊາບທົ່ວເຖິງກັນວ່າ, "ໃນນາມກະສັດແລະຄະນະ
ລາຊະມົນຕີ ເຮົາຂໍປະກາດຫ້າມບໍ່ໃຫ້ປະຊາຊົນ ແລະສັດກິນ ຫລືດື່ມສິ່ງໃດໆ ທັງໝົດ. [8]ທັງ
ຄົນ ແລະສັດຈະຕ້ອງໄວ້ທຸກ ໃຫ້ທຸກຄົນຕັ້ງຈິດຕັ້ງໃຈອ້ອນວອນພຣະເຈົ້າ ໃຫ້ເຊົາປະພຶດຊົ່ວ
ແລະເຊົາເຮັດຜິດທຸກຢ່າງ. [9]ບາງທີພຣະເຈົ້າອາດຈະຊົງປ່ຽນພຣະໄທ ແລະອາດຈະຊົງເຊົາ
ພຣະພິໂລດອັນຮ້າຍແຮງ ແລ້ວພວກເຮົາກໍຈະບໍ່ຕາຍ."
[10]ຕໍ່ມາ ພຣະເຈົ້າໄດ້ຊົງເຫັນຊາວນະຄອນນີເນເວເຊົາປະພຶດຊົ່ວ ພຣະອົງຈຶ່ງຊົງປ່ຽນພຣະ-
ໄທ ແລະບໍ່ຊົງລົງໂທດພວກເຂົາຕາມທີ່ໄດ້ຊົງກ່າວໄວ້.

# ບົດທີ 4

## ໂຢນາຮ້າຍ ແຕ່ພຣະເຈົ້າຊົງເມດຕາ

[1-2]ໂຢນາຄຽດ ແລະບໍ່ພໍໃຈທີ່ພຣະເຈົ້າຊົງປ່ຽນພຣະໄທ ລາວໄດ້ອ້ອນວອນຕໍ່ພຣະຜູ້ເປັນເຈົ້າ
ວ່າ, "ຂ້າແດ່ພຣະຜູ້ເປັນເຈົ້າ ຂ້ານ້ອຍຂໍທູນພຣະອົງວ່າ ເມື່ອຄາວຍັງຢູ່ໃນເມືອງຕົນເອງ ຂ້າ-
ນ້ອຍໄດ້ເວົ້າແລ້ວແມ່ນບໍວ່າພຣະອົງຈະປ່ຽນພຣະໄທ? ສະນັ້ນ ຂ້ານ້ອຍຈຶ່ງຢາກໜີໄປຍັງເມືອງ

ຕາຊິດ ເພາະຂ້ານ້ອຍຮູ້ດີວ່າ ພຣະອົງເປັນພຣະເຈົ້າຜູ້ປະກອບໄປດ້ວຍພຣະມະຫາກະລຸນາ
ແລະເມດຕາປານີ ບໍ່ຄ່ອຍຊົງພຣະພິໂລດ ຊົງພ້ອມສະເໝີທີ່ຈະປ່ຽນພຣະໄທ ແລະບໍ່ລົງໂທດຜູ້
ໃດ. [3]ຂ້າແດ່ພຣະຜູ້ເປັນເຈົ້າ ບັດນີ້ຂໍພຣະອົງຊົງເອົາຊີວິດຂອງຂ້ານ້ອຍໄປສາ ເພາະຂ້ານ້ອຍ
ຢາກຈະຕາຍເສຍດີກວ່າທີ່ຈະມີຊີວິດຢູ່ຕໍ່ໄປ.”

[4]ພຣະຜູ້ເປັນເຈົ້າຊົງຕອບໂຢນາວ່າ, “ການທີ່ເຈົ້າຄຽດນັ້ນ ມັນຖືກຕ້ອງແລ້ວບໍ?”

[5]ຄັນແລ້ວ ໂຢນາໄດ້ອອກໄປນັ່ງຢູ່ທາງທິດຕາເວັນອອກຂອງນະຄອນ ຢູ່ທີ່ນັ້ນ ລາວໄດ້ປຸກ
ຕູບຂຶ້ນຫລັງໜຶ່ງ ເພື່ອຄອຍເບິ່ງວ່າຈະມີເຫດການອັນໃດເກີດຂຶ້ນແກ່ມະຫານະຄອນນີ້. [6]ຝ່າຍ
ພຣະຜູ້ເປັນເຈົ້າຊົງສັ່ງໃຫ້ຕົ້ນໝາກຫຸ່ງເທດເກີດຂຶ້ນໃກ້ໆຕູບໂຢນາ ເພື່ອລາວຈະໄດ້ອາໄສຮົ່ມ
ແລະເພື່ອບັນເທົາທຸກບໍ່ໃຫ້ອຸກໃຈ ລາວດີໃຈຫລາຍທີ່ສຸດນຳຕົ້ນໝາກຫຸ່ງນີ້.

[7]ແຕ່ໃນຕອນເຊົ້າມື້ຕໍ່ມາ ພຣະເຈົ້າໄດ້ຊົງສັ່ງໃຫ້ດ້ວງມາກັດກິນຕົ້ນໝາກຫຸ່ງນັ້ນ ແລະມັນໄດ້
ຫ່ຽວແຫ້ງຕາຍໄປ.

[8]ເມື່ອຕາເວັນຂຶ້ນ ພຣະເຈົ້າກໍຊົງສັ່ງໃຫ້ລົມຮ້ອນພັດມາແຕ່ທາງທິດຕາເວັນອອກ ຄວາມຮ້ອນ
ຂອງແສງແດດໄດ້ແຜດເຜົາໂຢນາຈົນສະຫລົບໄປ ລາວຈຶ່ງເວົ້າວ່າ, “ຂ້ານ້ອຍຢາກຈະຕາຍເສຍ
ດີກວ່າຈະມີຊີວິດຢູ່.”

[9]ພຣະເຈົ້າຊົງຖາມໂຢນາວ່າ, “ການທີ່ເຈົ້າຄຽດຮ້າຍຕົ້ນໝາກຫຸ່ງນັ້ນ ມັນຖືກຕ້ອງບໍ?” ໂຢ-
ນາໄດ້ທູນຕອບວ່າ, “ການທີ່ຂ້ານ້ອຍຄຽດຈົນຢາກຕາຍນັ້ນ ກໍຖືກຕ້ອງແລ້ວ.” [10]ພຣະຜູ້ເປັນ-
ເຈົ້າຈຶ່ງຊົງກ່າວວ່າ, “ຕົ້ນໝາກຫຸ່ງນີ້ເຈົ້າບໍ່ໄດ້ລົງແຮງປູກ ມັນເກີດຂຶ້ນເອງໃນຄືນດຽວ ແລ້ວກໍ
ຫ່ຽວແຫ້ງຕາຍໄປໃນຄືນດຽວ ເຈົ້າກໍຍັງຄິດຮອດມັນຢູ່. [11]ເມື່ອເປັນດັ່ງນີ້ ເຮົາຈະບໍ່ສົງສານມະ-
ຫານະຄອນນີເນເວແດ່ບໍ ຊຶ່ງມີເດັກນ້ອຍທີ່ບໍ່ຮູ້ດຽງສາກວ່າແສນສອງໝື່ນຄົນ ແລະມີສັດລ້ຽງ
ເປັນຈຳນວນຫລາຍອີກດ້ວຍ.”

* * *

# ມີກາ

## ບົດທີ 1

[1]ພຣະທຳເຫລັ້ມນີ້ ບັນຈຸຖ້ອຍຄຳທີ່ພຣະຜູ້ເປັນເຈົ້າສົ່ງເຖິງມີກາ ຊາວເມືອງໂມເຣເຊັດ ໃນ
ສະໄໝຂອງໂຢທາມ ອາຮາດ ແລະເຮເຊກີຢາເປັນກະສັດຂອງຊາວຢູດາ ພຣະຜູ້ເປັນເຈົ້າໄດ້
ຊົງສະແດງສິ່ງທີ່ຈະເວົ້າດັ່ງຕໍ່ໄປນີ້ ທີ່ກ່ຽວກັບເມືອງຊາມາເຣຍ ແລະເມືອງເຢຣູຊາເລັມຕໍ່ມີກາ.

### ການຄໍ່າຄວນເຖິງເມືອງຊາມາເຣຍ ແລະເມືອງເຢຣູຊາເລັມ

[2] ຈົ່ງຟັງເລື່ອງນີ້ ຊົນຊາດທັງຫລາຍເອີຍ
ຈົ່ງຟັງເລື່ອງນີ້ ປວງຊົນທີ່ອາໄສຢູ່ເທິງແຜ່ນດິນໂລກ
ພຣະຜູ້ເປັນເຈົ້າຈະເປັນພະຍານຕໍ່ສູ້ເຈົ້າ
ຈົ່ງຟັງແມ! ສຽງຂອງພຣະອົງສົ່ງລົງມາຈາກພຣະວິຫານ
ບ່ອນສັກສິດຂອງພຣະອົງ.
[3] ພຣະຜູ້ເປັນເຈົ້າກຳລັງສະເດັດມາແຕ່ເບື້ອງເທິງ
ພຣະອົງຈະຊົງສະເດັດລົງມາຍ່າງເທິງຈອມພູທັງຫລາຍ.
[4] ແລ້ວພູທັງຫລາຍຈະເປື່ອຍລະລາຍໄປໃຕ້ພຣະບາດຂອງພຣະອົງ
ເໝືອນດັ່ງຂີ້ເຜີ້ງຖືກໄຟ
ມັນຈະໄຫລລົງສູ່ຮ່ອມພູ
ເໝືອນດັ່ງນໍ້າໄຫລລົງມາແຕ່ພູ.

[5]ເຫດການທັງປວງນີ້ບັງເກີດຂຶ້ນ ກໍເພາະວ່າປະຊາຊົນອິສຣາເອນໄດ້ເຮັດບາບ ແລະກະບົດ
ຕໍ່ສູ້ພຣະເຈົ້າ ເປັນຄວາມຜິດຂອງໃຜ ທີ່ອິສຣາເອນເປັນກະບົດ? ແມ່ນປະຊາຊົນຊາມາເຣຍ
ຫັ້ນແລ້ວ ແມ່ນໃຜບູຊາຮູບເຄົາລົບໃນປະເທດຢູດາ? ແມ່ນປະຊາຊົນເຢຣູຊາເລັມຫັ້ນແລ້ວ.
[6]ສະນັ້ນ ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ເຮົາຈະເຮັດໃຫ້ຊາມາເຣຍເປັນກອງສິ່ງຫັກເພພັງຢູ່
ໃນທົ່ງນາ ແລະໃຫ້ເປັນສວນສຳລັບປູກຕົ້ນອະງຸ່ນ ເຮົາຈະເທກ້ອນຫີນທີ່ໃຊ້ສ້າງເມືອງນັ້ນລົງທີ່
ຮ່ອມພູ ແລະຈະໃຫ້ເຫັນຮາກຖານຂອງເມືອງ. [7]ຮູບເຄົາລົບທັງໝົດຈະຖືກທຸບໃຫ້ມຸ່ນ ແລະຖືກ
ທຳລາຍດ້ວຍໄຟ ປະຊາຊົນໄດ້ຮູບເຄົາລົບເຫລົ່ານັ້ນມາຢ່າງບໍ່ສັດຊື່ຕໍ່ພຣະເຈົ້າ ແລະບັດນີ້
ພວກເຂົາຈະໄດ້ຮັບໂທດຈາກການບໍ່ສັດຊື່ນັ້ນຢ່າງເໝາະສົມ.”
[8]ແລ້ວມີກາເວົ້າຕໍ່ໄປວ່າ, “ກໍເພາະເຫດການເຫລົ່ານີ້ແຫລະ ຂ້ອຍຈຶ່ງເສົ້າໃຈ ແລະຄໍ່າຄວນ
ຂ້ອຍຈະຍ່າງຕີນເປົ່າ ແລະເປືອຍກາຍ ເພື່ອສະແດງຄວາມເສົ້າໝອງໃຈ ຂ້ອຍຈະຫອນເໝືອນ
ໝາປ່າ ແລະອີດຄາງເໝືອນນົກຈອກປ່າ. [9]ເພາະວ່າ ບາດແຜຂອງເມືອງຊາມາເຣຍຮັກສາໃຫ້
ດີບໍ່ໄດ້ ເມືອງຢູດາກໍກຳລັງຈະເປັນບາດແຜຄືກັນ ເພາະການທຳລາຍໄດ້ມາຮອດປະຕູເມືອງ
ເຢຣູຊາເລັມ ບ່ອນທີ່ປະຊາຊົນອາໄສຢູ່ແລ້ວ.”

## ສັດຕູມາໃກ້ເມືອງເຢຣູຊາເລັມ

[10]ຢ່າໄດ້ບອກເລື່ອງພ່າຍແພ້ຂອງພວກເຂົາ ໃຫ້ຊາວເມືອງກາດຮູ້ ຢ່າໃຫ້ພວກເຂົາເຫັນການ
ຮ້ອງໄຫ້ຂອງພວກເຮົາ ຈົ່ງກິ້ງເກືອກຢູ່ໃນຂີ້ຝຸ່ນດ້ວຍຄວາມສິ້ນຫວັງໃນເມືອງເບັດ-ເລ-ອາຟະ-
ຣາ. [11]ຊາວເມືອງຊາຟີເອີຍ ຈົ່ງໜີໄປຕ່າງຖິ່ນຢ່າງເປືອຍກາຍ ແລະຢ່າງອັບອາຍຂາຍໜ້າ
ພວກທີ່ອາໄສຢູ່ໃນເມືອງຊາອານານ ຈະບໍ່ມີຊີວິດລອດອອກມາໄດ້ ເມື່ອພວກເຈົ້າໄດ້ຍິນຊ່າງ
ເບັດ-ເອດເຊັນ ຮ້ອງໄຫ້ຮໍ່າໄຮ ເຈົ້າຈົ່ງຮູ້ເສຍວ່າ ບ່ອນນັ້ນບໍ່ແມ່ນບ່ອນລີ້ໄພອີກແລ້ວ. [12]ຊາວ
ເມືອງມາໂຣດ ເຈັບແສບຢ່າງສາຫັດ ພວກເຂົາຕ້ອງການຄວາມບັນເທົາ ກໍຍ້ອນວ່າ ພຣະຜູ້-
ເປັນເຈົ້າໄດ້ນຳເອົາຄວາມຫາຍຍະນະມາໃກ້ເມືອງເຢຣູຊາເລັມ. [13]ພວກເຈົ້າທີ່ອາໄສຢູ່ໃນເມືອງ
ລາກິດ ຈົ່ງເອົາມ້າໃສ່ກວຽນຂອງເຈົ້າຕຽມໄວ້ ພວກເຈົ້າໄດ້ເຮັດບາບຕາມພວກອິສຣາເອນ ດັ່ງ-
ນັ້ນ ຈຶ່ງເຮັດໃຫ້ເມືອງເຢຣູຊາເລັມຕົກໃນບາບດ້ວຍ. [14]ແລະບັດນີ້ ຊາວເມືອງຢູດາເອີຍ ຈົ່ງສັ່ງ
ລາເມືອງໂມເຣເຊັດ-ກັດ ພວກກະສັດອິສຣາເອນຈະບໍ່ໄດ້ຮັບການຊ່ອຍເຫລືອຈາກເມືອງອັກ-
ຊິບເລີຍ.

[15]ພຣະຜູ້ເປັນເຈົ້າຊົງກ່າວວ່າ "ຊາວເມືອງມາເຣຊາເອີຍ ເຮົາຈະມອບເຈົ້າໃຫ້ສັດຕູທີ່ກຳລັງ
ຈະຍຶດເອົາເມືອງຂອງເຈົ້າ ສ່ວນກະສັດອິສຣາເອນກໍຈະປົບໜີໄປລີ້ຢູ່ໃນຖໍ້າທີ່ອະດຸລາມ.
[16]ຊາວຢູດາເອີຍ ຈົ່ງແຖຫົວຂອງພວກເຈົ້າ ເພື່ອໄວ້ທຸກໃຫ້ແກ່ລູກທີ່ຮັກຂອງພວກເຈົ້າສາ ຈົ່ງ
ແຖຫົວໃຫ້ໂລ້ນເໝືອນແຮ້ງ ກໍເພາະວ່າ ພວກລູກຂອງພວກເຈົ້າຈະຖືກເອົາໜີໄປເລີຍ.

# ບົດທີ 2

## ເຄາະກຳຂອງພວກທີ່ບີບບັງຄັບຄົນຈົນ

[1]ຜູ້ທີ່ນອນຄິດວາງແຜນການຊົ່ວຮ້າຍ ຈະໄດ້ຮັບຄວາມວິບັດຢ່າງໜັກ ເມື່ອຮຸ່ງເຊົ້າຂຶ້ນ ພໍເຂົາ
ໄດ້ໂອກາດ ພວກເຂົາກໍເຮັດຄວາມຊົ່ວທີ່ໄດ້ວາງແຜນໄວ້ນັ້ນ. [2]ເມື່ອພວກເຂົາຕ້ອງການທົ່ງນາ
ແລະບ້ານເຮືອນ ພວກເຂົາກໍໃຊ້ກຳລັງ ແລະເລ້ຫລ່ຽມຫລອກເອົາເຮືອນ ແລະທີ່ດິນຂອງເຈົ້າ
ຊັບ.

[3]ເພາະສະນັ້ນ ພຣະຜູ້ເປັນເຈົ້າຈຶ່ງຊົງກ່າວວ່າ, "ເຮົາກຳລັງວາງແຜນເອົາໄພພິບັດມາໃສ່
ພວກເຈົ້າ ຊຶ່ງບໍ່ມີໃຜຈະຫລົບຫລີກໄດ້ ພວກເຈົ້າຈະຍ່າງໄປຢ່າງສະຫງ່າຜ່າເຜີຍຕໍ່ໄປບໍ່ໄດ້ອີກ
ເພາະວ່າມັນເປັນຍາມເຄາະຮ້າຍສຳລັບພວກເຈົ້າ.

[4]ເມື່ອເວລານັ້ນມາຮອດ ຈະມີຄົນເອົາເລື່ອງຂອງພວກເຈົ້າມາກ່າວເປັນຄຳຂວັນໃນຄາວໄພພິ-
ບັດ ແລະຮ້ອງເພງອັນຂົມຂື່ນນີ້ວ່າ,

"ພວກເຮົາພິນາດໄປຈົນໝົດກ້ຽງສາແລ້ວ
 ພຣະຜູ້ເປັນເຈົ້າໄດ້ຍຶດເອົາດິນໝູ່ເຮົາໄປ
ແລ້ວເອົາໄປມອບໃຫ້ສັດຕູ."

[5]ດັ່ງນັ້ນ ບໍ່ມີໃຜໃນພວກເຈົ້າຈະໄດ້ຮັບດິນຕອນໜຶ່ງຕອນໃດໃນມື້ທີ່ແບ່ງປັນດິນ ລະຫວ່າງໄພ່
ພົນຂອງພຣະຜູ້ເປັນເຈົ້າ. [6]ປະຊາຊົນເທດສະໜາສັ່ງສອນຂ້າພະເຈົ້າວ່າ, "ຢ່າສັ່ງສອນພວກ

ເຮົາກ່ຽວກັບເລື່ອງເຫລົ່ານັ້ນເລີຍ ພຣະເຈົ້າຈະບໍ່ເຮັດໃຫ້ພວກເຮົາເສື່ອມເສຍດອກ ປະຊາຊົນອິ-
ສຣາເອນໄດ້ຖືກສາບແຊ່ງຊັ້ນບໍ? [7]ພຣະຜູ້ເປັນເຈົ້າໝົດຄວາມອົດທົນແລ້ວບໍ? ພຣະອົງຈະເຮັດ
ສິ່ງເຫລົ່ານັ້ນອີ່ຫລີຫວາ? ພຣະອົງຈະບໍ່ກ່າວຢ່າງເປັນມິດຕໍ່ຜູ້ທີ່ປະພຶດຊອບທຳບໍ?"

[8]ພຣະຜູ້ເປັນເຈົ້າຊົງຕອບວ່າ, "ພຣະເຈົ້າໄດ້ເຮັດໃຫ້ພວກເຈົ້າເອງເປັນສັດຕູຕໍ່ໄພ່ພົນຂອງ
ເຮົາ ພວກເຈົ້າໄດ້ລັກເອົາແມ່ນແຕ່ເສື້ອຂອງຄົນທີ່ຢູ່ຢ່າງສະຫງົບ ຄື ບັນດາຜູ້ທີ່ກັບຈາກສະ-
ໜາມຮົບ ຊຶ່ງຄິດວ່າຕົນປອດໄພແລ້ວ. [9]ພວກເຈົ້າຂັບໄລ່ພວກຜູ້ຍິງໄພ່ພົນຂອງເຮົາ ອອກຈາກ
ເມືອງອັນຜາສຸກຂອງພວກເຂົາ ແລະຍັງໃຫ້ລູກຂອງພວກເຂົາບໍ່ໄດ້ຮັບພອນຂອງເຮົາຕະຫລອດ
ໄປ. [10]ຈົ່ງໜີໄປສາ ບ່ອນນີ້ບໍ່ມີທີ່ພັກພາອາໄສ ຍ້ອນຄວາມບາບພວກເຈົ້າຈຶ່ງຈະພົບກັບຄວາມ
ພິນາດອັນຮ້າຍແຮງ.

[11]ບຸກຄົນຜູ້ໜຶ່ງຊຶ່ງທ່ຽວໄປຕົວະ ແລະຫລອກລວງປະຊາຊົນໂດຍກ່າວວ່າ ນໍ້າອະງຸ່ນ ແລະ
ເຫລົ້າອະງຸ່ນຈະຫລັ່ງໄຫລມາສຳລັບພວກເຈົ້າ ອັນນີ້ ຄືການທຳນວຍຢ່າງໜຶ່ງທີ່ປະຊາຊົນມັກ.

[12]ແຕ່ເຮົາຈະທ້ອນໂຮມປະຊາຊົນອິສຣາເອນທັງໝົດ ພ້ອມທັງພວກທີ່ເຫລືອຢູ່ ເຮົາຈະ
ທ້ອນໂຮມພວກເຈົ້າໃຫ້ຢູ່ນຳກັນເໝືອນດັ່ງຝູງແກະຢູ່ໃນຄອກ ແລະເໝືອນດັ່ງຝູງສັດຢູ່ໃນທົ່ງ
ຫຍ້າ ດິນແດນຂອງພວກເຈົ້າຈະເຕັມໄປດ້ວຍສຽງຂອງຝູງຊົນທັງຫລາຍ."

[13]ພຣະເຈົ້າຈະໄຂທົນທາງສຳລັບນຳພວກເຂົາອອກໄປ ພວກເຂົາຈະຊອດອອກໄປທາງປະຕູ
ເຂົ້າເມືອງ ແລະໄປຢ່າງມີອິດສະລະ ພຣະຜູ້ເປັນເຈົ້າຈະເປັນເຈົ້າຊີວິດຂອງພວກເຂົາ ຈະຊົງ
ນຳພາອອກໄປ.

# ບົດທີ 3

## ມີກາກ່າວໂທດຜູ້ນຳອິສຣາເອນ

[1]ບັນດາຜູ້ປົກຄອງອິສຣາເອນເອີຍ ຈົ່ງຟັງ ພວກເຈົ້າຄວນຈະເປັນຜູ້ຮັກສາຄວາມຍຸດຕິທຳ.
[2]ແຕ່ພວກເຈົ້າກຽດຊັງຄວາມດີ ແລະຮັກຄວາມຊົ່ວ ພວກເຈົ້າຂູດຮີດ ແລະທໍລະມານໄພ່ພົນຂອງ
ເຮົາຢ່າງທາລຸນຄື. [3]ພວກເຈົ້າກັດກິນຊີ້ນ ແລະລອກໜັງຂອງພວກເຂົາອອກ ຫັກກະດູກຂອງ
ພວກເຂົາ ແລະຕັດໃຫ້ເປັນຕ່ອນໆ ເໝືອນກັບຊີ້ນຢູ່ໃນໝໍ້. [4]ແລ້ວຈະມີເວລາໜຶ່ງ ທີ່ພວກເຈົ້າ
ຈະຮ້ອງຫາພຣະຜູ້ເປັນເຈົ້າ ແຕ່ພຣະອົງຈະບໍ່ຊົງຕອບພວກເຈົ້າ ພຣະອົງຈະບໍ່ຟັງການອ້ອນ-
ວອນຂອງພວກເຈົ້າ ຍ້ອນວ່າພວກເຈົ້າໄດ້ປະພຶດຊົ່ວ.

[5]ປະຊາຊົນໄດ້ຖືກຜູ້ປະກາດພຣະທຳຫລອກລວງ ຄື ພວກສັນຍາໃຫ້ຄວາມສະຫງົບແກ່ຜູ້ທີ່
ລ້ຽງພວກເຂົາ ແຕ່ນາບຂູ່ເອົາເສິກສົງຄາມມາສູ່ຜູ້ທີ່ບໍ່ຍິນຍອມປະຕິບັດຕາມ ສຳລັບພວກຜູ້ປະ-
ກາດພຣະທຳເຫລົ່ານັ້ນ ພຣະຜູ້ເປັນເຈົ້າຊົງກ່າວແກ່ພວກເຂົາວ່າ, [6]"ຍ້ອນວ່າ ພວກເຈົ້າໄດ້ນຳ
ໄພ່ພົນຂອງເຮົາໄປໃນທາງທີ່ຜິດ ພວກເຈົ້າຈະບໍ່ມີນິມິດອີກຕໍ່ໄປ ແລະພວກເຈົ້າຈະບໍ່ສາມາດທຳ
ນວຍເລື່ອງໃດໆ ໄດ້ເລີຍ ພວກຜູ້ປະກາດພຣະທຳເອີຍ ຄວາມສຳຄັນຂອງພວກເຈົ້າກໍໃກ້ຈະ
ໝົດແລ້ວ ເໝືອນດັ່ງຕາເວັນກຳລັງຈະຕົກ. [7]ຜູ້ທີ່ທຳນວຍເຫດການໃນອະນາຄົດ ຈະໄດ້ຮັບ
ຄວາມອັບອາຍຂາຍໜ້າ ຈາກການລົ້ມເຫລວຂອງພວກເຂົາ ພວກເຂົາທຸກຄົນເສຍໃຈກໍຍ້ອນວ່າ

ພຣະເຈົ້າບໍ່ໄດ້ປະທານຄຳຕອບໃຫ້ແກ່ພວກເຂົາ.
[8]ແຕ່ສຳລັບຂ້າພະເຈົ້າແລ້ວ ຂ້າພະເຈົ້າເຕັມໄປດ້ວຍ ພຣະວິນຍານ ຂອງ ພຣະຜູ້ເປັນເຈົ້າ ຄື
ດ້ວຍລິດເດດ ດ້ວຍຄວາມຍຸດຕິທຳ ແລະດ້ວຍຄວາມກ້າຫານ ເພື່ອບອກປະຊາຊົນ ອິສຣາເອນ
ໃຫ້ສຳນຶກເຖິງຄວາມບາບຂອງພວກເຂົາ. [9]ບັນດາຜູ້ປົກຄອງ ອິສຣາເອນ ເອີຍ ຈົ່ງຟັງຂ້າພະເຈົ້າ
ເທີ້ນ ພວກເຈົ້າກຽດຊັງຄວາມຍຸດຕິທຳ ແລະປ່ຽນຄວາມຊອບທຳມາເປັນຄວາມອະທຳ. [10]ພວກ
ເຈົ້າສ້າງ ເຢຣູຊາເລັມ ເມືອງຂອງ ພຣະເຈົ້າ ຂຶ້ນມາດ້ວຍການຄາດຕະກຳ ແລະດ້ວຍການອະທຳ.
[11]ບັນດາຜູ້ປົກຄອງ ເມືອງ ກໍປົກຄອງດ້ວຍເຫັນແກ່ສິນບົນ ບັນດາພວກປະໂລຫິດກໍໃຊ້ກົດໝາຍ
ເພື່ອເຫັນແກ່ສິນຈ້າງລາງວັນ ບັນດາຜູ້ປະກາດພຣະທຳ ກໍຖວາຍດ້ວຍເຫັນແກ່ເງິນ ແລະພວກ
ເຂົາທັງໝົດຍັງອ້າງວ່າ ພຣະຜູ້ເປັນເຈົ້າ ໄດ້ສະຖິດຢູ່ກັບພວກເຂົາ ໂດຍເວົ້າວ່າ, "ພຣະຜູ້ເປັນ-
ເຈົ້າ ໄດ້ສະຖິດຢູ່ນຳເຮົາແມ່ນບໍ? ບໍ່ມີໄພອັນຕະລາຍໃດໆ ຈະມາເຖິງພວກເຮົາດອກ." [12]ດ້ວຍ
ເຫດນີ້ແຫລະ ຍ້ອນພວກເຈົ້າ ເມືອງ ຊີໂອນ ຈະຖືກໄຖເໝືອນດັ່ງໄຖນາ ເຢຣູຊາເລັມ ຈະກາຍ-
ເປັນກອງສິ່ງຫັກເພພັງ ແລະພູເຂົາແຫ່ງພຣະວິຫານຈະເປັນປ່າ.

# ບົດທີ 4

## ພຣະຜູ້ເປັນເຈົ້າແຫ່ງສາກົນໂລກປົກຄອງດ້ວຍສັນຕິສຸກ

[1] ໃນຍຸກຕໍ່ມາ ຈະເປັນດັ່ງນີ້ຄື:
ພູເຂົາບ່ອນພຣະວິຫານຕັ້ງຢູ່
ຈະເປັນພູເຂົາທີ່ສູງສຸດ ໃນຈຳນວນພູເຂົາທັງຫລາຍ
ຫລາຍຊົນຊາດຈະຫລັ່ງໄຫລມາທີ່ນັ້ນ.
[2] ແລະປະຊາຊົນຂອງຊົນຊາດເຫລົ່ານັ້ນຈະເວົ້າວ່າ,
"ມາເທາະ ເຮົາພາກັນໄປຍັງພູເຂົາຂອງ ພຣະຜູ້ເປັນເຈົ້າ
ຂຶ້ນໄປຍັງພຣະວິຫານຂອງ ພຣະເຈົ້າ ແຫ່ງ ອິສຣາເອນ
ພວກເຮົາຈະໄດ້ຮູ້ສິ່ງທີ່ພຣະອົງຕ້ອງການໃຫ້ພວກເຮົາເຮັດ
ພວກເຮົາຈະເດີນທາງໄປໃນຫົນທາງທີ່ພຣະອົງໄດ້ຊົງເລືອກໄວ້"
ພຣະທຳຂອງ ພຣະຜູ້ເປັນເຈົ້າ ມາຈາກ ເຢຣູຊາເລັມ
ຈາກຊີໂອນ ບ່ອນທີ່ພຣະອົງຊົງ ເວົ້າກັບໄພ່ພົນຂອງພຣະອົງ.
[3] ພຣະອົງຈະຊົງໄກ່ເກ່ຍການຜິດຖຽງກັນລະຫວ່າງຊົນຊາດ
ແລະເປັນຜູ້ພິພາກສາຄະດີ ລະຫວ່າງມະຫາອຳນາດ
ທັງຫລາຍ ທີ່ຢູ່ຫ່າງໄກຈາກ ອິສຣາເອນ
ພວກເຂົາຈະຕີດາບໃຫ້ເປັນໝາກສົບໄຖ
ແລະຈະຕີຫອກໃຫ້ເປັນມີດຕັດກິ່ງໄມ້
ຊົນຊາດທັງຫລາຍຈະບໍ່ເຮັດເສິກຕໍ່ສູ້ກັນອີກຕໍ່ໄປ
ຫລືຈະບໍ່ຈັດຕຽມເພື່ອເຮັດເສິກອີກ.

4 ທຸກໆຄົນຢູ່ໃນຄວາມສະຫງົບສຸກ
ຢູ່ໃຕ້ຮົ່ມອະງຸ່ນ ແລະຕົ້ນໝາກເດື່ອຂອງຕົນ
ໂດຍບໍ່ມີໃຜເຮັດໃຫ້ພວກເຂົາຢ້ານກົວ
ພຣະຜູ້ເປັນເຈົ້າຜູ້ມີອຳນາດຍິ່ງໃຫຍ່ໄດ້ສັນຍາໄວ້ດັ່ງນີ້.
5ແຕ່ລະຊົນຊາດນະມັດສະການ ແລະເຊື່ອຟັງພະຂອງຕົນ ແຕ່ພວກເຮົາຈະນະມັດສະການ
ແລະເຊື່ອຟັງ ພຣະຜູ້ເປັນເຈົ້າຂອງພວກເຮົາຕະຫລອດໄປເປັນນິດ.

### ອິສຣາເອນຈະກັບຄືນສູ່ປະເທດເດີມ

6ພຣະຜູ້ເປັນເຈົ້າຊົງກ່າວວ່າ, "ເມື່ອຍາມຂອງເຮົາມາຮອດແລ້ວ ເຮົາຈະເຕົ້າໂຮມໄພ່ພົນຂອງ
ເຮົາ ຊຶ່ງແມ່ນພວກທີ່ເຮົາໄດ້ລົງໂທດ ແລະໄດ້ຮັບກຳຈາກການເນລະເທດ. 7ພວກເຂົາເປັນຄົນ
ອ່ອນແຮງ ແລະຫ່າງໄກຈາກເຮືອນຊານບ້ານຊ່ອງ ແຕ່ເຮົາຈະໃຫ້ພວກເຂົາຕັ້ງປະເທດໃໝ່
ແລະຈະກາຍເປັນປະເທດທີ່ຍິ່ງໃຫຍ່ ເຮົາຈະປົກຄອງພວກເຂົາຕະຫລອດໄປຢູ່ເທິງພູຊີໂອນ.
8ເຢຣູຊາເລັມ ບ່ອນທີ່ພຣະເຈົ້າຊົງເຝົ້າເບິ່ງໄພ່ພົນຂອງພຣະອົງເອີຍ ເຈົ້າຈະເປັນເມືອງເອກ
ຂອງລາຊະອານາຈັກ ອິສຣາເອນ ອີກເທື່ອໜຶ່ງ. 9ເປັນຫຍັງພວກເຈົ້າຈຶ່ງຮ້ອງໄຫ້ສຽງດັງແທ້ໆ?
ເປັນຫຍັງເຈົ້າຈຶ່ງເຈັບປວດເໝືອນກັບຜູ້ຍິງອອກລູກ? ບໍ່ແມ່ນພວກເຈົ້າບໍ່ມີກະສັດປົກຄອງບໍ?
ແລະພວກທີ່ປຶກສາຂອງພວກເຈົ້າຕາຍໝົດແລ້ວບໍ? 10ປະຊາຊົນອິສຣາເອນເອີຍ ເຈົ້າເຈັບປວດ
ແລະຮ້ອງຄາງເໝືອນດັ່ງຍິງອອກລູກ ມາບັດນີ້ ພວກເຈົ້າຕ້ອງໜີຈາກເມືອງນີ້ໄປຢູ່ໃນທົ່ງນາ
ແລ້ວພວກເຈົ້າຕ້ອງໄປເມືອງ ບາບີໂລນ ເພາະວ່າໃນທີ່ນັ້ນ ພຣະຜູ້ເປັນເຈົ້າຈະຊົດຊ່ອຍພວກ
ເຈົ້າໃຫ້ພົ້ນຈາກອຳນາດຂອງສັດຕູ.
11ຫລາຍຊົນຊາດໄດ້ຊ່ອມມືກັນໂຈມຕີເຈົ້າ ພວກເຂົາເວົ້າວ່າ, "ເຢຣູຊາເລັມຄວນຖືກທຳລາຍ
ພວກເຮົາຈະເຫັນເມືອງນີ້ຫັກເພພັງ." 12ແຕ່ຊົນຊາດເຫລົ່ານັ້ນບໍ່ຮູ້ຈັກພຣະດຳລິຂອງ ພຣະຜູ້ເປັນ-
ເຈົ້າ ພວກເຂົາບໍ່ຮູ້ຈັກວ່າ ພຣະອົງໄດ້ວາງແຜນການທ້ອນໂຮມພວກເຂົາ ເພື່ອເອົາມາລົງໂທດ
ດັ່ງດຽວກັນກັບໂຮມເອົາມັດເຂົ້າມາຟາດໃນລານ.
13ພຣະຜູ້ເປັນເຈົ້າຊົງກ່າວວ່າ, "ປະຊາຊົນ ເຢຣູຊາເລັມ ເອີຍ ຈົ່ງໄປລົງໂທດສັດຕູຂອງເຈົ້າ
ສາ ເຮົາຈະເຮັດໃຫ້ພວກເຈົ້າແຂງແຮງເໝືອນດັ່ງງົວກະທິງທີ່ມີເຂົາເຫລັກ ແລະມີຕີນໂລຫະ
ພວກເຈົ້າຈະຢຽບທຳລາຍຫລາຍປະເທດໃຫ້ມຸ່ນ ແລະຊັບສົມບັດຂອງພວກເຂົາຈະເປັນຂອງເຮົາ
ສິ່ງເຫລົ່ານັ້ນຈະຖືກຖວາຍໃຫ້ແກ່ພຣະຜູ້ເປັນເຈົ້າແຫ່ງພິພົບທັງໝົດ."

## ບົດທີ 5

1ປະຊາຊົນອິສຣາເອນເອີຍ ຈົ່ງຕຽມພົນໄວ້ຮົບເສິກ ເພາະສັດຕູລ້ອມເຮົາໄວ້ແລ້ວ ແລະຜູ້ນຳ
ອິສຣາເອນກໍຖືກສັດຕູຕີໜ້າແລ້ວ.

### ພຣະຜູ້ເປັນເຈົ້າຊົງສັນຍາຈະປະທານຜູ້ປົກຄອງຈາກເມືອງເບັດເລເຮັມ

2ເບັດເລເຮັມ ເອຟຣາທາເອີຍ ເຈົ້າເປັນເມືອງນ້ອຍເມືອງໜຶ່ງໃນເຂດຢູດາ ແຕ່ວ່າ ເຮົາຈະ
ແຕ່ງຕັ້ງໃຫ້ມີຜູ້ໜຶ່ງມາປົກຄອງພວກອິສຣາເອນ ທີ່ເຊື້ອສາຍຂອງເພິ່ນຈະມາຈາກສະໄໝເດີມ.

[3]ດັ່ງນັ້ນ ພຣະຜູ້ເປັນເຈົ້າຈະປະໄພ່ພົນຂອງພຣະອົງໃຫ້ສັດຕູ ຈົນເຖິງເວລາທີ່ຍິງຖືພາອອກ-
ລູກໄດ້ຜູ້ຊາຍ ຄັນແລ້ວບັນດາພີ່ນ້ອງໃນເມືອງທີ່ຍັງຖືກເນລະເທດ ກໍຈະມາທ້ອນໂຮມກັນກັບ
ປະຊາຊົນອິສຣາເອນ. [4]ເວລາຜູ້ນັ້ນມາ ເພິ່ນຈະມາປົກຄອງປະຊາຊົນດ້ວຍອຳນາດທີ່ມາແຕ່
ພຣະຜູ້ເປັນເຈົ້າ ແລະດ້ວຍສະຫງ່າລາສີຂອງພຣະອົງ ປະຊາຊົນຂອງເພິ່ນຈະຢູ່ຢ່າງປອດໄພ
ກໍຍ້ອນວ່າມະນຸດທຸກໆຄົນໃນໂລກ ຈະຮັບຮູ້ຄວາມຍິ່ງໃຫຍ່ຂອງເພິ່ນ.
[5]ເພິ່ນຈະເປັນຜູ້ນຳເອົາຄວາມສະຫງົບສຸກມາ.

## ການຊ່ອຍໃຫ້ພົ້ນ ແລະການລົງໂທດ

ເມື່ອຊາວອັດຊີເຣຍ ຢຽບຢ່ຳ ແລະບຸກລຸກຖຸກຄາມດິນແດນຂອງພວກເຮົາ ພວກເຮົາຈະສົ່ງ
ພວກຜູ້ນຳທີ່ເຂັ້ມແຂງໄປຕໍ່ສູ້ກັບພວກເຂົາ. [6]ແລະພວກຜູ້ນຳຈະຍຶດເອົາດິນແດນຂອງອັດຊີເຣຍ
ມາປົກຄອງດ້ວຍກຳລັງ ເມື່ອຊາວອັດຊີເຣຍບຸກລຸກຖຸກຄາມດິນແດນຂອງພວກເຮົານັ້ນ ພວກຜູ້-
ນຳກໍຈະຊ່ອຍພວກເຮົາໃຫ້ພົ້ນໄພດ້ວຍວິທີຍຶດຄອງນັ້ນ.
[7]ປະຊາຊົນອິສຣາເອນ ຜູ້ຍັງມີຊີວິດເຫລືອຢູ່ກໍຈະເປັນເໝືອນດັ່ງນ້ຳຄ້າງອັນສົດຊື່ນ ທີ່ພຣະ-
ຜູ້ເປັນເຈົ້າເຫລົ່ງມາສຳລັບຊົນຊາດ ແລະເໝືອນດັ່ງຮ່າຝົນທີ່ຕົກເທິງຫຍ້າທີ່ກຳລັງປົ່ງ ພວກເຂົາ
ຈະອາໄສພຣະເຈົ້າ ບໍ່ແມ່ນອາໄສມະນຸດ. [8]ປະຊາຊົນອິສຣາເອນບາງຄົນ ທີ່ຍັງເຫລືອຢູ່ຈະຢູ່
ທ່າມກາງຊົນຊາດຕ່າງໆ ພວກເຂົາຈະເປັນເໝືອນໂຕສິງທີ່ກຳລັງຊອກຫາອາຫານໃນປ່າ ຫລື
ໃນທົ່ງຫຍ້າ ມັນຄຸບເອົາແກະໃນຝູງແລ້ວຈີກເປັນຕ່ອນໆ ແລະບໍ່ມີແກະໂຕໃດໃນທີ່ນັ້ນຈະລອດ
ພົ້ນຈາກມັນໄປໄດ້. [9]ອິສຣາເອນຈະຜາບແພ້ສັດຕູ ແລະທຳລາຍພວກເຂົາທຸກຄົນຈົນໝົດກ້ຽງ.
[10]ພຣະຜູ້ເປັນເຈົ້າຊົງກ່າວວ່າ, "ໃນເວລານັ້ນ ເຮົາຈະເອົາມ້າຂອງພວກເຈົ້າໜີໄປ ແລະຈະ
ທຳລາຍລໍ້ຂອງພວກເຈົ້າ. [11]ເຮົາຈະຢຽບຢ່ຳຄ້າຍປ້ອງກັນໃຫ້ໝົດ ແລະທຳລາຍເມືອງທັງຫລາຍ
ໃນດິນແດນຂອງເຈົ້າ. [12]ເຮົາຈະທຳລາຍເຄື່ອງລາງຂອງດີທີ່ເຈົ້າໃຊ້ ແລະບໍ່ໃຫ້ມີໝໍມໍອີກຕໍ່ໄປ.
[13]ເຮົາຈະທຳລາຍຮູບເຄົາລົບ ແລະເສົາສັກສິດທີ່ພວກເຈົ້າໄດ້ນະມັດສະການ ພວກເຈົ້າຈະບໍ່ໄດ້
ນະມັດສະການສິ່ງທີ່ພວກເຈົ້າເຮັດນັ້ນອີກຕໍ່ໄປ. [14]ເຮົາຈະຖອນຫລັກສັກສິດໃນປະເທດຂອງ
ພວກເຈົ້າ ແລະທຳລາຍຫົວເມືອງຕ່າງໆ ຂອງພວກເຈົ້າ. [15]ແລະດ້ວຍຄວາມຮ້າຍອັນໃຫຍ່ຂອງ
ເຮົາ ເຮົາຈະແກ້ແຄ້ນຊົນຊາດທັງຫລາຍທີ່ບໍ່ເຊື່ອຟັງເຮົາ."

# ບົດທີ 6

## ພຣະຜູ້ເປັນເຈົ້າສູ້ຄວາມກັບອິສຣາເອນ

[1]ຈົ່ງຟັງ ພຣະຜູ້ເປັນເຈົ້າສູ້ຄວາມກັບອິສຣາເອນ ພຣະຜູ້ເປັນເຈົ້າຈົ່ງລຸກຂຶ້ນ ແລ້ວຖະ-
ແຫລງຄະດີຂອງພຣະອົງຕໍ່ພູເຂົາ ເພື່ອເປັນພະຍານ ຂໍໃຫ້ເນີນພູໄດ້ຍິນສິ່ງທີ່ພຣະອົງຊົງກ່າວ.
[2]ພູເຂົາທັງຫລາຍ ແລະຮາກຖານອັນໝັ້ນຄົງຂອງພິພົບເອີຍ ຈົ່ງຟັງຄະດີຂອງພຣະຜູ້ເປັນເຈົ້າ
ແມ ພຣະຜູ້ເປັນເຈົ້າກຳລັງສູ້ຄວາມກັບໄພ່ພົນຂອງພຣະອົງ ພຣະອົງກຳລັງກ່າວໂທດຕໍ່ປະຊາ-
ຊົນອິສຣາເອນ. [3]ພຣະຜູ້ເປັນເຈົ້າຊົງກ່າວວ່າ, "ໄພ່ພົນຂອງເຮົາເອີຍ ເຮົາໄດ້ເຮັດຫຍັງແດ່ແກ່
ເຈົ້າ? ເຮົາໄດ້ເຮັດຫຍັງໃຫ້ເຈົ້າລຳບາກຍາກແຄ້ນແດ່? ຈົ່ງຕອບເຮົາມາເບິ່ງດູ. [4]ເຮົາໄດ້ນຳພວກ

ເຈົ້າອອກຈາກປະເທດເອຢິບ ເຮົາໄດ້ໄຖ່ພວກເຈົ້າອອກຈາກການເປັນຂ້ອຍຂ້າ ເຮົາໄດ້ສົ່ງໂມ-
ເຊ ອາໂຣນ ແລະນາງມີຣີອາມ ເພື່ອເປັນຜູ້ນຳພາພວກເຈົ້າ. 5ໄພ່ພົນຂອງເຮົາເອີຍ ຈົ່ງລະ-
ນຶກເຖິງສິ່ງທີ່ບາລາກ ເຈົ້າຊີວິດແຫ່ງໂມອາບວາງແຜນຕໍ່ສູ້ເຈົ້າ ແລະຈົ່ງລະນຶກເຖິງຖ້ອຍຄຳທີ່
ບາລາອາມລູກຊາຍຂອງເບໂອຕອບກະສັດວ່າຢ່າງໃດ ຂໍໃຫ້ລະນຶກເຖິງສິ່ງທັງຫລາຍທີ່ເກີດຂຶ້ນ
ອີກ ໃນລະຫວ່າງທາງແຕ່ເມືອງຊິດຕີມ ຫາເມືອງກິນການ ເພື່ອວ່າເຈົ້າຈະໄດ້ສຳນຶກໃນສິ່ງທີ່
ເຮົາໄດ້ເຮັດເພື່ອຊ່ອຍຊີວິດຂອງພວກເຈົ້າ.”

## ພຣະຜູ້ເປັນເຈົ້າຕ້ອງການຫຍັງຈາກມະນຸດ

6ເມື່ອຂ້ານ້ອຍນະມັດສະການພຣະຜູ້ເປັນເຈົ້າແຫ່ງສະຫວັນ ຂ້ານ້ອຍຈະນຳເອົາສິ່ງໃດເຂົ້າ
ມາເຝົ້າພຣະອົງ? ຂ້ານ້ອຍຄວນຈະເອົາລູກງົວໂຕຕຸ້ຍພີທີ່ສຸດມາເຜົາຖວາຍບູຊາພຣະອົງບໍ?
7ພຣະຜູ້ເປັນເຈົ້າຈະຊົງພໍພຣະໄທບໍ? ຖ້າຂ້ານ້ອຍນຳແກະພັນໂຕ ຫລືຖັງນ້ຳມັນສົດອັນບໍ່ໝົດ
ເປັນຈັກເທື່ອມາຖວາຍພຣະອົງ ຂ້ານ້ອຍຄວນຖວາຍລູກກົກໃຫ້ພຣະອົງ ເພື່ອໄຖ່ຄວາມບາບ
ຂອງຂ້ານ້ອຍບໍ? 8ມະນຸດເອີຍ ພຣະຜູ້ເປັນເຈົ້າໄດ້ບອກພວກເຈົ້າແລ້ວວ່າແມ່ນຫຍັງດີ ສິ່ງທີ່
ພຣະອົງປະສົງຈາກເຈົ້າກໍຄື ໃຫ້ປະຕິບັດຄວາມຍຸດຕິທຳ ສະແດງຄວາມຮັກອັນໝັ້ນຄົງ ແລະ
ເຊື່ອຟັງພຣະເຈົ້າຂອງເຈົ້າຢ່າງອ່ອນນ້ອມ.

9ການຢຳເກງພຣະຜູ້ເປັນເຈົ້າເປັນການສະຫລາດແທ້ ພຣະອົງຊົງຮ້ອງໃສ່ເມືອງໜຶ່ງວ່າ,
“ຈົ່ງຟັງ ໄພ່ພົນທີ່ໄດ້ປະຊຸມກັນຢູ່ໃນເມືອງ. 10ໃນເຮືອນຂອງຄົນຊົ່ວມີຊັບສົມບັດ ຊຶ່ງພວກເຂົາ
ໄດ້ມາດ້ວຍການສຸດຈະລິດ ພວກເຂົາໃຊ້ຕາຊິງປອມຊຶ່ງເຮົາກຽດຊັງ. 11ເຮົາຈະຍົກໂທດມະນຸດ
ຜູ້ໃຊ້ຕາຊັ່ງ ແລະຕາຊິງໂກງໄດ້ບໍ? 12ຄົນຮັ່ງມີໃນເມືອງຫາຜົນປະໂຫຍດນຳຄົນທຸກຍາກ ປະ-
ຊາຊົນກໍຂີ້ຕົວະ. 13ມາບັດນີ້ ເຮົາໄດ້ລົງມືມ້າງເພ ແລະທຳລາຍແລ້ວ ກໍຍ້ອນຄວາມບາບຂອງ
ພວກເຈົ້າ. 14ເຈົ້າຈະກິນແຕ່ບໍ່ຮູ້ຈັກອີ່ມ ເຈົ້າຈະຫິວເລື້ອຍໆ ໄປ ເມື່ອເຈົ້າສະສົມສິ່ງຂອງໄວ້
ເຮົາກໍຈະທຳລາຍສິ່ງເຫລົ່ານັ້ນດ້ວຍສົງຄາມເສຍ. 15ເຈົ້າຈະຫວ່ານເມັດເຂົ້າ ແຕ່ຈະບໍ່ໄດ້ເກັບ
ກ່ຽວ ເຈົ້າຈະອີ່ວນ້ຳມັນຈາກໝາກກອກເທດ ແຕ່ເຈົ້າຈະບໍ່ໄດ້ໃຊ້ນ້ຳມັນນັ້ນ ເຈົ້າຈະເຮັດເຫລົ້າ
ອະງຸ່ນ ແຕ່ເຈົ້າຈະບໍ່ໄດ້ດື່ມເຫລົ້ານັ້ນ. 16ເຈົ້າໄດ້ເຮັດຊົ່ວຕາມກະສັດອົມຣີ ແລະລູກຊາຍຂອງ
ພະອົງຄື ກະສັດອາຮາບ ໂດຍໄດ້ດຳເນີນຕາມກົນອຸບາຍຂອງພວກເຂົາ ດັ່ງນັ້ນແຫລະ ເຮົາຈະ
ນຳພວກເຈົ້າໄປສູ່ຄວາມຈິບຫາຍ ແລະເຮັດໃຫ້ປະຊາຊົນທຸກຄົນຂອງພວກເຈົ້າຖືກຫຍໍ້ຫຍັນ
ປະຊາຊົນທຸກບ່ອນຈະໝິ່ນປະໝາດພວກເຈົ້າ.”

# ບົດທີ 7

## ສິນທຳຂອງອິສຣາເອນເສື່ອມໂຊມ

1ສິ້ນຫວັງສາແລ້ວ ຂ້າພະເຈົ້າເປັນເໝືອນຄົນຫິວຜູ້ໜຶ່ງຊຶ່ງຫາໝາກໄມ້ ແລະໝາກອະງຸ່ນໃນ
ຕົ້ນບໍ່ໄດ້ ໝາກອະງຸ່ນ ແລະໝາກເດື່ອກໍຖືກເກັບໄປໝົດແລ້ວ. 2ຢູ່ໃນປະເທດນີ້ບໍ່ມີຄົນສຸດຈະ-
ລິດ ແລະຄົນສັດຊື່ຕໍ່ພຣະເຈົ້າແມ່ນແຕ່ຄົນດຽວ ພວກເຂົາຕາຍໝົດແລ້ວ ຕ່າງກໍຫາໂອກາດຂ້າ
ຟັນຊຶ່ງກັນແລະກັນ ຕ່າງກໍຫ້າງແຮ້ວດັກຈັບພີ່ນ້ອງຂອງຕົນເອງ. 3ພວກເຂົາຊຳນິຊຳນານໃນ

ການເຮັດຊົ່ວ ພວກເຈົ້າໜ້າທີ່ ແລະຜູ້ພິພາກສາຕ້ອງການສິນບົນ ຄົນທີ່ມີອິດທິພົນກໍເອີ່ຍເຖິງແຕ່
ສິ່ງທີ່ຕົນເອງຕ້ອງການ ສະນັ້ນ ພວກເຂົາຈຶ່ງວາງອຸບາຍໃສ່ກັນແລະກັນ. 4ແມ່ນແຕ່ຄົນດີ ແລະ
ຄົນສຸດຈະລິດກວ່າໝູ່ໃນພວກເຂົາກໍເປັນເໝືອນກັບໜາມ ເມື່ອເວລານັ້ນມາເຖິງ ພຣະເຈົ້າກໍຈະ
ລົງໂທດໄພ່ພົນຂອງພຣະອົງ ຕາມທີ່ໄດ້ຊົງເຕືອນພວກເຂົາໄວ້ ບັດນີ້ ພວກເຂົາຈຶ່ງກຳລັງວຸ້ນ-
ວາຍ. 5ຢ່າເຊື່ອໃຈທາງຢ່າວາງໃຈຄົນ ຈົ່ງລະມັດລະວັງໃນສິ່ງທີ່ເຈົ້າເວົ້າ ແມ່ນແຕ່ກັບເມຍກໍດີ.
6ໃນເວລານັ້ນ ລູກຊາຍຈະປະພຶດຮ້າຍຕໍ່ພໍ່ ແລະລູກສາວຈະຕໍ່ສູ້ແມ່ ລູກໄພ້ຈະຕໍ່ສູ້ແມ່ຍ່າ ແມ່ນ
ແຕ່ສະມາຊິກໃນຄອບຄົວດຽວກໍກາຍເປັນສັດຕູກັນ. 7ແຕ່ຂ້າພະເຈົ້າຈະເຝົ້າແຍງເບິ່ງພຣະຜູ້-
ເປັນເຈົ້າ ຂ້າພະເຈົ້າຈະລໍຄອຍພຣະເຈົ້າດ້ວຍຄວາມຫວັງ ເພາະພຣະອົງຈະຊົດຊ່ອຍຂ້າພະເຈົ້າ
ໃຫ້ພົ້ນໄພ ພຣະເຈົ້າຈະຊົງຟັງຂ້າພະເຈົ້າ.

## ພຣະຜູ້ເປັນເຈົ້າຊ່ອຍໃຫ້ພົ້ນ

8ສັດຕູຂອງຂ້ອຍເອີຍ ຢ່າເຢາະເຍີ້ຍຂ້ອຍເລີຍ ຂ້ອຍລົ້ມລົງແຕ່ຂ້ອຍຈະລຸກຂຶ້ນໃໝ່ ຕອນນີ້
ຂ້ອຍຢູ່ໃນຄວາມມືດ ແຕ່ພຣະຜູ້ຊົງເປັນເຈົ້າເປັນແສງສະຫວ່າງຂອງຂ້ອຍ. 9ຂ້ອຍໄດ້ເຄີຍເຮັດ
ບາບຕໍ່ສູ້ພຣະເຈົ້າ ເພາະສະນັ້ນ ຂ້ອຍຈະຕ້ອງອົດທົນຕໍ່ພຣະພິໂລດຂອງພຣະອົງຢູ່ຊົ່ວໄລຍະ
ໜຶ່ງ ໃນທີ່ສຸດ ພຣະອົງຈະປົກປ້ອງຂ້ອຍ ແລະເຮັດໃຫ້ຜູ້ທີ່ກ່າວຜິດຕໍ່ຂ້ອຍນັ້ນພ່າຍແພ້ຄະດີໄປ.
10ແລ້ວສັດຕູຂອງຂ້ອຍຈະເຫັນສິ່ງນັ້ນ ແລະຈະໄດ້ຮັບຄວາມອັບອາຍຂາຍໜ້າ ສັດຕູຜູ້ຊຶ່ງກ່າວ
ທັບຖົມຂ້ອຍໄດ້ເວົ້າວ່າ, "ພຣະຜູ້ເປັນເຈົ້າຂອງເຈົ້າຢູ່ໃສ" ຂ້ອຍກໍຈະເຫັນພວກເຂົາພ່າຍແພ້ໄປ
ແລະຖືກຢຽບຢໍ່າລົງເໝືອນຂີ້ຕົມໃນຖະໜົນ. 11ຊາວເຢຣູຊາເລັມເອີຍ ເວລາທີ່ຈະສ້າງກຳແພງ
ເມືອງຂຶ້ນໃໝ່ມາຮອດແລ້ວ ໃນເວລານັ້ນ ເຂດແດນຂອງພວກເຈົ້າຈະຂະຫຍາຍອອກໄປ.
12ປະຊາຊົນຂອງພວກເຈົ້າ ກໍຈະກັບຄືນມາຈາກທົ່ວທຸກບ່ອນ ຄື ຈາກອັດຊີເຣຍທາງທິດຕາ-
ເວັນອອກ ຈາກເອຢິບທາງທິດໃຕ້ ຈາກທະເລ ແລະພູເຂົາທີ່ແສນໄກ. 13ແຕ່ທົ່ວໂລກຈະກາຍ-
ເປັນຖິ່ນແຫ້ງແລ້ງກັນດານກໍຍ້ອນວ່າ ຄົນທີ່ອາໄສຢູ່ໃນໂລກນີ້ໄດ້ເຮັດຊົ່ວ.

## ພຣະຜູ້ເປັນເຈົ້າຊົງເມດຕາພວກອິສຣາເອນ

14ໂອ! ພຣະຜູ້ເປັນເຈົ້າ ຂໍຊົງເປັນຜູ້ລ້ຽງໄພ່ພົນຊຶ່ງພຣະອົງໄດ້ຊົງເລືອກໄວ້ແລ້ວ ດຽວນີ້
ພວກເຂົາກຳລັງຢູ່ໂດດດ່ຽວໃນປ່າ ຢູ່ເຂດອ້ອມແອ້ມພວກເຂົາມີດິນດີສຳລັບການປູກຝັງ ຄື ດິນ
ໃນທົ່ງຫຍ້າທີ່ບາຊານ ແລະກິເລອາດ ຂໍໃຫ້ພວກເຂົາໄປທຳມາຫາກິນໃນທີ່ນັ້ນທ້ອນ ດັ່ງທີ່
ພວກເຂົາໄດ້ທຳມາຫາກິນມາແລ້ວແຕ່ໂບຮານນະການ. 15ໂອ! ພຣະຜູ້ເປັນເຈົ້າ ຂໍເຮັດການ
ອັດສະຈັນສຳລັບພວກຂ້ານ້ອຍເໝືອນຄາວທີ່ພຣະອົງຊົງເຮັດຍາມອອກຈາກປະເທດເອຢິບແດ່-
ທ້ອນ. 16ຊົນຊາດທັງຫລາຍຈະເຫັນການກະທຳນັ້ນ ແລະຈະໄດ້ຮັບຄວາມອັບອາຍຂາຍໜ້າ
ແມ່ນວ່າພວກເຂົາຈະມີອຳນາດຫລາຍປານໃດກໍຕາມ ພວກເຂົາກໍຈະເວົ້າຫຍັງບໍ່ໄດ້ ແລະຟັງ
ຫຍັງບໍ່ອອກ. 17ພວກເຂົາຈະລີເລືອໄປຕາມດິນເໝືອນກັບງູ ພວກເຂົາຢ້ານກົວຈົນຕົວສັ່ນ ແລະ
ອອກມາຈາກບ່ອນລັບລີ້ເໝືອນດັ່ງສັດເລືອຄານ ພວກເຂົາຈະກັບມາຫາພຣະຜູ້ເປັນເຈົ້າຂອງ
ພວກເຂົາ ດ້ວຍຄວາມຢ້ານກົວ.

18ໂອ! ພຣະຜູ້ເປັນເຈົ້າເອີຍ ບໍ່ມີພະໃດເໝືອນພຣະອົງເລີຍ ພຣະອົງຊົງຍົກໂທດຄວາມບາບ

ຂອງໄພ່ພົນທີ່ຍັງເຫລືອຢູ່ ພຣະອົງຈະບໍ່ຊົງພິໂລດອີກຕໍ່ໄປ ແຕ່ຍິນດີຈະສະແດງຄວາມຮັກອັນ
ໝັ້ນຄົງຕໍ່ພວກຂ້ານ້ອຍ. [19]ພຣະອົງຍັງຈະຊົງເມດຕາຕໍ່ພວກຂ້ານ້ອຍອີກເທື່ອໜຶ່ງ ຄື ພຣະອົງ
ຈະຢຽບຄວາມຜິດຂອງພວກຂ້ານ້ອຍໄວ້ໃຕ້ພຣະບາດ ແລະໂຍນຄວາມບາບຂອງພວກຂ້ານ້ອຍ
ລົງໄປໃນທະເລເລິກ. [20]ພຣະອົງຈະສະແດງຄວາມສັດຊື່ ສຸດຈະລິດແລະຄວາມຮັກອັນໝັ້ນຄົງຕໍ່
ພວກອິສຣາເອນ ໄພ່ພົນຂອງພຣະອົງ ຕໍ່ເຊື້ອສາຍຂອງອັບຣາຮາມ ດັ່ງທີ່ພຣະອົງໄດ້ຊົງສັນ-
ຍາຢ່າງຄັກແນ່ຕໍ່ປູ່ຍ່າຕາຍາຍຂອງພວກຂ້ານ້ອຍແຕ່ບູຮານນະການ.

*  *  *

# ນາຮູມ

## ບົດທີ 1

### ພຣະເຈົ້າຜູ້ບໍລິສຸດຈະລົງໂທດຄົນບາບ

1ພຣະຄຳໂອວາດກ່ຽວກັບເມືອງນີເນເວ ໜັງສືເລື່ອງນິມິດຂອງທ່ານນາຮູມຊາວເມືອງເອນ-
ໂກດ 2ພຣະຜູ້ເປັນເຈົ້າແມ່ນພຣະເຈົ້າຜູ້ຊົງຫວງແຫນ, ແລະອົງຕອບແທນ ພຣະຜູ້ເປັນເຈົ້າ
ແກ້ແຄ້ນ ແລະຊົງມີພຣະພິໂລດ; ພຣະຜູ້ເປັນເຈົ້າຈະແກ້ແຄ້ນຜູ້ທີ່ຂັດຂວາງຕໍ່ສູ້ພຣະອົງ ແລະ
ຈະເກັບຮັກສາຄວາມຮ້າຍໄວ້ເພື່ອຕໍ່ສູ້ພວກສັດຕູຂອງພຣະອົງ 3ພຣະຜູ້ເປັນເຈົ້າໂກດຮ້າຍຊ້າ ມີ
ລິດທານຸພາບຍິ່ງໃຫຍ່ ພຣະອົງຈະບໍ່ຊົງຖືຄົນຜິດວ່າບໍ່ຜິດ ເສັ້ນທາງຂອງພຣະຜູ້ເປັນເຈົ້າຢູ່ໃນ
ລົມຫົວກຸດ ແລະພາຍຸ ແລະເມກເປັນຂີ້ຝຸ່ນຈາກພຣະບາດຂອງພຣະອົງ 4ພຣະອົງຕິຕຽນນ້ຳທະ-
ເລ ແລະເຮັດໃຫ້ມັນແຫ້ງໄປ ແລະຊົງໃຫ້ແມ່ນ້ຳລຳເຊທັງຫລາຍບົກແຫ້ງໄປ ແຂວງບາຊານ
ແລະພູກາເມນກໍຫ່ຽວແຫ້ງໄປ, ດອກໄມ້ຢູ່ເທິງພູເລບານອນກໍຫ່ຽວແຫ້ງໄປ 5ບັນດາພູເຂົາທັງ-
ຫລາຍກໍສັ່ນສະເທືອນຕໍ່ພຣະພັກພຣະອົງ ແລະບັນດາພູນ້ອຍກໍເປື່ອຍໄປ, ແຜ່ນດິນຖືກຍົກຂຶ້ນຕໍ່
ພຣະພັກພຣະອົງພ້ອມທັງໂລກ ແລະສິ່ງທີ່ອາໄສຢູ່ໃນໂລກ 6ໃຜຈະຕ້ານທານຕໍ່ພຣະພິໂລດຂອງ
ພຣະອົງໄດ້ ໃຜຈະທົນຕໍ່ຄວາມຮ້ອນແຮງແຫ່ງຄວາມໂກດຮ້າຍຂອງພຣະອົງໄດ້ ພຣະພິໂລດ
ຂອງພຣະອົງພົ່ນອອກມາເໝືອນໄຟ ແລະຫີນດານທັງຫລາຍກໍແຕກຕໍ່ພຣະພັກພຣະອົງ

7ພຣະຜູ້ເປັນເຈົ້າປະເສີດ ແມ່ນເປັນບ່ອນກຳບັງອັນເຂັ້ມແຂງໃນວັນທີ່ຍາກລຳບາກ ພຣະອົງ
ຮູ້ຈັກຜູ້ທີ່ວາງໃຈ ໃນພຣະອົງ 8ແຕ່ພຣະອົງຈະກະທຳບ່ອນນີເນເວນັ້ນໃຫ້ຮາບກ້ຽງດ້ວຍນ້ຳຖ້ວມ
ທີ່ໄຫລຖ້ວມລົ້ນ ແລະຄວາມມືດຈະໄລ່ຕາມພວກທີ່ເປັນສັດຕູຕໍ່ພຣະອົງ 9ພວກເຈົ້າຄິດອຸບາຍອັນ
ໃດເພື່ອຕໍ່ສູ້ພຣະຜູ້ເປັນເຈົ້າ ພຣະອົງຈະທຳລາຍໃຫ້ກ້ຽງ ຄວາມຄັດສົນຈະບໍ່ລຸກຂຶ້ນມາ ເປັນ
ເທື່ອທີສອງ 10ເຖິງວ່າພວກເຂົາເປັນຄືເຄືອໜາມກ່ຽວກັນ ແລະເປັນຄືເມົາເຫລົ້າດ້ວຍນ້ຳອະງຸ່ນ
ພວກເຂົາຈະຖືກໄຟເຜົາຄືຕໍເຟືອງແຫ້ງແລ້ວໝົດກ້ຽງໄປ 11ຜູ້ທີ່ຄິດປ້ອງຮ້າຍຕໍ່ສູ້ພຣະຜູ້ເປັນເຈົ້າ
ກໍອອກມາຈາກພວກເຈົ້າ ເປັນຜູ້ເຕືອນສະຕິດ້ວຍຄວາມຮ້າຍ

12ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ “ແມ່ນວ່າພວກເຂົາຈະຍັງຢູ່ຄົບຖ້ວນ ແລະມີຈຳນວນຫລວງ-
ຫລາຍ ພວກເຂົາກໍຈະຖືກດັບສູນ ແລະໝົດເສື່ອມໄປ ແລະຖ້າເຮົາໃຫ້ເຈົ້າມີຄວາມທຸກໃຈນຳ
ແລ້ວ ເຮົາກໍຈະບໍ່ໃຫ້ເຈົ້າມີຄວາມທຸກອີກຕໍ່ໄປ 13ບັດນີ້ ເຮົາຈະຫັກແອກຂອງພວກເຂົາອອກຈາກ
ເຈົ້າ ແລະຈະເຮັດໃຫ້ໂສ້ທັງຫລາຍຂອງເຈົ້າຂາດໄປ” 14ພຣະຜູ້ເປັນເຈົ້າກ່າວບັນຊາດ້ວຍເລື່ອງ
ເຈົ້າວ່າ “ເຈົ້າຈະບໍ່ມີເຊື້ອສາຍທີ່ມີຊື່ຕາມຊື່ຂອງເຈົ້າອີກຕໍ່ໄປ ເຮົາຈະທຳລາຍຮູບເຄົາລົບທີ່ແກະ-
ສະຫລັກ ແລະຮູບເຄົາລົບທີ່ຫລໍ່ອອກຈາກວິຫານແຫ່ງພະຂອງເຈົ້າ ເຮົາຈະຕຽມບ່ອນຝັງສົບ
ຂອງເຈົ້າ ເພາະເຈົ້າຊົ່ວຮ້າຍຫລາຍ”

### ພຣະພອນສຳລັບຢູດາໃນອະນາຄົດ

15ເບິ່ງແມ ຕີນຂອງຜູ້ນຳຂ່າວປະເສີດມາ ຕີນຂອງຜູ້ປະກາດຄວາມສຸກສຳລານ ກໍຢູ່ເທິງພູ-

ເຂົາທັງຫລາຍ ໂອ ຢູດາເອີຍ ຈົ່ງຖືຮັກສາເທດສະການທັງຫລາຍຂອງເຈົ້າໄວ້ ຈົ່ງເຮັດຕາມຄຳ
ປະຕິຍານຂອງເຈົ້າໃຫ້ສຳເລັດສາ ເພາະວ່າຄົນຊົ່ວຈະບໍ່ມາຫາເຈົ້າອີກ ພວກເຂົາຖືກຈິບຫາຍ
ໝົດແລ້ວ

# ບົດທີ 2

## ນະຄອນນີເນເວຈະຖືກທຳລາຍດ້ວຍສົງຄາມ

1ຜູ້ໂຈມຕີໄດ້ລຸກຂຶ້ນມາຕໍ່ສູ້ກັບເຈົ້າແລ້ວ ຈົ່ງເຂົ້າປະຈຳປ້ອມ ຈົ່ງເຝົ້າທາງໄວ້ ຈົ່ງຄາດແອວ
ໄວ້ ຈົ່ງໃຫ້ອຳນາດຂອງເຈົ້າຍັ້ງຢືນ. 2ເພາະວ່າພຣະຜູ້ເປັນເຈົ້າໄດ້ເອົາກຽດຕິຍົດຂອງຢາໂຄບ
ກັບມາອີກຄື ຍົດສັກຂອງອິສຣາເອນ ເພາະວ່າພວກປຸ້ນໄດ້ປຸ້ນເອົາໄປ ແລະໄດ້ທຳລາຍກິ່ງອະ-
ງຸ່ນທັງຫລາຍຂອງພວກເຂົາ 3ຄົນແຂງແຮງມີກຳລັງຂອງພຣະອົງຖືໂລ່ສີແດງ ຄົນໃຈເກັ່ງກ້າ
ທັງຫລາຍນຸ່ງເຄື່ອງສີແດງເຂັ້ມ ໃນມື້ທີ່ຕຽມຕົວ ເຫລັກກ້າກໍເຫລື້ອມໃນບັນດາລົດທັງຫລາຍ
ແລະຕົ້ນແປກກໍຈະສັ່ນສະທ້ານຢ່າງຮຸນແຮງ 4ລົດຮົບແລ່ນໄປຕາມຖະໜົນດ້ວຍຄວາມຮ້າຍ ມັນ
ແລ່ນຢ່າງໄວໃນຖະໜົນທີ່ກວ້າງຂວາງ ລົດນັ້ນປະກົດອອກຄືໄຟທີ່ແລ່ນໄວໆ ແລະເໝືອນກັບ
ສາຍຟ້າແມບ 5ກະສັດອາຊີລີຄິດເຖິງຈຳພວກຄົນທີ່ກ້າຫານຂອງຕົນ ເພິ່ນກໍສະດຸດ ເພິ່ນຟ້າວ
ຍ່າງຊື່ໄປຫາກຳແພງ ເພິ່ນຈັດແຈງທຳປ້ອມ 6ປະຕູທີ່ແມ່ນ້ຳທັງຫລາຍກໍໄຂອອກ ແລ້ວທີ່ພະລາ-
ຊະວັງກໍເຈື່ອນ

7ມີຂໍ້ດຳລັດ ນີເນເວຈະຖືກປະເປືອຍຢູ່ ພວກເຂົາຈະຈັບມັນໄປ ແລະບັນດາສາວໃຊ້ຂອງມັນ
ຈະຮ້ອງຄາງຄືສຽງນົກເຂົາ ແລະພວກເຂົາຈະຕີເອິກຂອງພວກເຂົາ 8ນີເນເວກໍຄືສະນ້ຳຕັ້ງແຕ່ມື້
ເກີດ ເຖິງປານນັ້ນ ພວກເຂົາກໍຈະໜີອອກມາ ພວກເຂົາຮ້ອງວ່າ "ຢຸດ, ຢຸດ" ແຕ່ກໍບໍ່ມີໃຜ
ຫລຽວຫລັງກັບ 9ຈົ່ງປຸ້ນເອົາເງິນ ຈົ່ງປຸ້ນເອົາຄຳ ມີຊັບສົມບັດເຄື່ອງປະເສີດຕ່າງໆຢ່າງບໍລິບູນບໍ່
ມີທີ່ສິ້ນສຸດ 10ເມືອງນັ້ນກໍຮ້າງເປົ່າໄປ ຖືກປຸ້ນ ແລະມ້າງເພແລ້ວ ແລະຈິດໃຈກໍເປື່ອຍໄປ, ຫົວ-
ເຂົ່າທັງຫລາຍກໍສັ່ນເຊັ່ນ, ບັ້ນແອວກໍເຈັບປວດໄປໝົດ ໃບໜ້າຂອງທຸກຄົນກໍຊີດໄປ 11ບ່ອນຢູ່
ອາໄສຂອງໂຕສິງຢູ່ໃສ ແລະບ່ອນທີ່ສິງໜຸ່ມທັງຫລາຍຫາກິນຢູ່ບ່ອນໃດ, ບ່ອນທີ່ໂຕສິງເຖົ້າ,
ໂຕສິງແມ່ ແລະລູກຂອງມັນໄດ້ທຽວໄປມາ ແລະບໍ່ມີຜູ້ໃດເຮັດໃຫ້ມັນຢ້ານກົວນັ້ນ ຢູ່ບ່ອນໃດ?
12ໂຕສິງນັ້ນໄດ້ຈີກອາຫານໃຫ້ພຽງພໍສຳລັບລູກຂອງມັນ ແລະໄດ້ບີດຄໍເຫຍື່ອສຳລັບສິງແມ່ທັງ-
ຫລາຍ ມັນສະສົມເຫຍື່ອເຕັມຖ້ຳ ແລະສະສົມຊີ້ນທີ່ຈີກແລ້ວເຕັມຮັງ 13ພຣະຜູ້ເປັນເຈົ້າອົງຍິ່ງ
ໃຫຍ່ກ່າວວ່າ ເບິ່ງແມ ເຮົາຕໍ່ສູ້ເຈົ້າ ເຮົາຈະເຜົາລົດຮົບຂອງເຈົ້າໃຫ້ເປັນຄວັນໄຟ ແລະດາບຈະ
ສັງຫານໂຕສິງໜຸ່ມຂອງເຈົ້າ ເຮົາຈະຕັດເຫຍື່ອຂອງເຈົ້າຈາກໂລກ ແລະສຽງຜູ້ສົ່ງຂ່າວຂອງເຈົ້າ
ຈະບໍ່ມີໃຜໄດ້ຍິນອີກ.

# ບົດທີ 3

## ເມືອງນີເນເວຈະຮັບການລົງໂທດທີ່ສົມກັບການກະທຳຂອງມັນ

1ວິບັດແກ່ເມືອງທີ່ເປິເປື້ອນໄປດ້ວຍເລືອດ ທີ່ເຕັມໄປດ້ວຍການອຸບາຍກັບການຊົ່ວຊ້າ, ການ
ຍາດຊິງ ກໍບໍ່ຢຸດບໍ່ເຊົາໃນເມືອງນັ້ນ 2ສຽງຂອງໄມ້ແສ້ ແລະສຽງອຶກກະທຶກຂອງກົງລໍ້ ກັບຝູງມ້າ

ແລະລົດຮົບທັງຫລາຍທີ່ແລ່ນໄປ 3ຄົນຂີ່ມ້າທີ່ແລ່ນໄປພ້ອມທັງດາບ ແລະຫອກທີ່ເຫລື້ອມແລະ
ບັນດາຄົນທີ່ຖືກຂ້າຕາຍເປັນກອງໆ ຮ່າງຄົນຕາຍບໍ່ຮູ້ຈັກໝົດ ພວກເຂົາຊຸນສະດຸດຊາກສົບທັງ-
ຫລາຍນັ້ນ 4ພຣະຜູ້ເປັນເຈົ້າອົງຍິ່ງໃຫຍ່ສູງສຸດໄດ້ກ່າວວ່າ “ຍ້ອນການຫລິ້ນຊູ້ຫລາຍຈົນນັບບໍ່
ຖ້ວນຂອງຍິງແມ່ຈ້າງ ຜູ້ມີສະເໜ່ ແລະເປັນຈອມເວດມົນຄາຖາ ທີ່ຂາຍພວກຕ່າງຊາດດ້ວຍ
ການຫລິ້ນຊູ້ຂອງນາງ ແລະຂາຍບັນດາ ຄອບຄົວທັງຫລາຍດ້ວຍເວດມົນຄາຖາຂອງນາງ
5ພຣະຜູ້ເປັນເຈົ້າອົງຍິ່ງໃຫຍ່ (ພຣະເຈົ້າແຫ່ງຈັກກະວານ) ກ່າວວ່າ ເບິ່ງແມ ເຮົາຕໍ່ສູ້ເຈົ້າ ແລະ
ຈະຍົກເຄື່ອງຂອງເຈົ້າປົກໜ້າເຈົ້າ ເຮົາຈະໃຫ້ຊາວຕ່າງຊາດເຫັນຄວາມປະເປືອຍຂອງເຈົ້າ ແລະ
ໃຫ້ລາຊະອານາຈັກທັງຫລາຍເຫັນຄວາມອັບອາຍຂອງເຈົ້າ 6ເຮົາຈະເອົາຂອງເປິເປື້ອນແກວ່ງໃສ່
ເຈົ້າ ແລະໃຫ້ຖືກຄວາມຊົ່ວຮ້າຍ ແລະຈະປະຈານເຈົ້າຕໍ່ໜ້າຄົນທັງຫລາຍ 7ຕໍ່ມາ ຄົນທັງປວງທີ່
ແນມເຫັນເຈົ້າກໍຈະປົບໜີໄປໄກຈາກເຈົ້າ ແລະຈະກ່າວວ່າ “ນີເນເວເປັນເມືອງຮ້າງເປົ່າແລ້ວ”
ໃຜຈະສົງສານເຈົ້າ ເຮົາຈະໄປຊອກຫາຜູ້ໃດຢູ່ໃສມາເລົ້າໂລມນາງໄດ້ 8ເຈົ້າດີກວ່າເມືອງເທເບັດ
ບໍ, ເມືອງນີ້ຕັ້ງຢູ່ລະຫວ່າງແມ່ນ້ຳ ຊຶ່ງມີນ້ຳອ້ອມຮອບເມືອງ, ມີທະເລເປັນທີ່ກຳບັງ ມີທະເລເປັນ
ກຳແພງເມືອງບໍ? 9ປະເທດເອທິໂອເປຍ ແລະເອຢິບເປັນກຳລັງຂອງເມືອງນີ້ ແລະບໍ່ສິ້ນສຸດ
ພຸດ ແລະລີເບຍໄດ້ຢູ່ນຳພວກຄົນທີ່ຊ່ວຍເມືອງນີ້ 10ເຖິງປານນັ້ນ ເມືອງນັ້ນກໍຍັງຖືກກວາດໄປ
ນາງຕົກໄປເປັນຊະເລີຍ ລູກນ້ອຍໆຂອງນາງກໍຖືກໂຍນລົງ ແຕກອອກເປັນຕ່ອນໆທີ່ແຈທົນ-
ທາງທຸກສາຍ ພວກເຂົາໄດ້ຈັບສະຫລາກຖືກຜູ້ທີ່ມີກຽດໃນເມືອງນີ້ ແລະຄົນໃຫຍ່ທັງໝົດໄດ້ຖືກ
ລ່າມໂສ້ 11ພວກເຈົ້າທັງຫລາຍຈະເມົາເຫລົ້າ ແລະຈະຖືກເຊື່ອງໄວ້, ພວກເຈົ້າທັງປວງຈະຊອກ
ຫາບ່ອນທີ່ເຂັ້ມແຂງຍ້ອນສັດຕູ 12ປ້ອມທັງໝົດຂອງເຈົ້າຈະເປັນເໝືອນຕົ້ນໝາກເດື່ອເທດ ມີ
ໝາກເດື່ອເທດສຸກລຸ້ນທຳອິດ ຖ້າຖືກຊັ່ນ ກໍຈະຕົກລົງໄປໃນປາກຂອງຜູ້ທີ່ກິນ 13ເບິ່ງແມ ຄົນ
ຂອງເຈົ້າຊຶ່ງຢູ່ທ່າມກາງເຈົ້າກໍຄືພວກຜູ້ຍິງ ບັນດາປະຕູເມືອງແຫ່ງແຜ່ນດິນຂອງເຈົ້າກໍໄຂສຳລັບ
ພວກສັດຕູຂອງເຈົ້າ ໄຟໄດ້ໄໝ້ດ່ານປະຕູຂອງເຈົ້າໝົດແລ້ວ 14ຈົ່ງຕັກນ້ຳຂຶ້ນໄວ້ສຳລັບການປິດ
ລ້ອມເມືອງ ຈົ່ງເສີມກຳລັງປ້ອມປ້ອງກັນຂອງເຈົ້າ ຈົ່ງລົງໄປໃນບ່ອນດິນປຽກ ຢຽບດິນໜຽວໃຫ້
ເຂົ້າກັນ ຈົ່ງແປງເຕົາໄຟເຜົາດິນຈີ່ໃຫ້ແຂງແຮງຂຶ້ນ 15ໃນບ່ອນນັ້ນ ໄຟກໍຈະໄໝ້ເຈົ້າ ດາບຈະ
ຂ້າເຈົ້າ ດາບຈະທຳລາຍເຈົ້າຄືໂຕດ້ວງ ຈົ່ງອອກແມ່ແພ່ລູກໃຫ້ຫລາຍຄືໂຕດ້ວງ ຈົ່ງອອກແມ່ແພ່
ລູກຄືໂຕຕັກແຕນ 16ເຈົ້າໄດ້ໃຫ້ພວກພໍ່ຄ້າຂອງເຈົ້າທະວີຫລາຍຂຶ້ນກວ່າດວງດາວທັງຫລາຍໃນ
ທ້ອງຟ້າ ຝູງໂຕດ້ວງນັ້ນລອກຄາບແລ້ວກໍບິນໜີ 17ເຈົ້ານາຍຂອງເຈົ້າກໍເໝືອນຕັກແຕນ ແລະ
ພວກນາຍທະຫານຂອງເຈົ້າເປັນເໝືອນຝູງຕັກແຕນທີ່ພັກຢູ່ໃນພຸ່ມໄມ້ໃນມື້ອາກາດເຢັນ ເມື່ອ
ດວງອາທິດຂຶ້ນ ມັນກໍບິນໜີໄປໝົດ ບໍ່ມີໃຜຮູ້ວ່າມັນໄປໃສ

18ໂອ ກະສັດແຫ່ງອັດຊີເຣຍເອີຍ ພວກຜູ້ລ້ຽງແກະຂອງເຈົ້ານອນຫລັບແລ້ວ ຜູ້ສູງສັກຂອງ
ເຈົ້າຈະອາໄສໃນຂີ້ຝຸ່ນດິນ ຊົນຊາດຂອງເຈົ້າກໍພັດພາກຈາກກັນຢູ່ເທິງພູເຂົາທັງຫລາຍ ແລະບໍ່ມີ
ຜູ້ໃດຮວບຮວມພວກເຂົາໄດ້ 19ບໍ່ມີຢາປິ່ນປົວບາດແຜຂອງເຈົ້າ ພະຍາດຂອງເຈົ້າກໍສາຫັດ
ຫລາຍ ຄົນທັງປວງທີ່ໄດ້ຍິນຂ່າວຂອງເຈົ້າ ເຂົາກໍຕົບມືເຍາະເຍີ້ຍເຈົ້າ, ມີໃຜບໍທີ່ບໍ່ໄດ້ຮັບໄພ
ອັນຕະລາຍຂອງເຈົ້າຕະຫລອດ.

# ຮາບາກຸກ

## ບົດທີ 1

1ຕໍ່ໄປນີ້ ແມ່ນຖ້ອຍຄຳທີ່ພຣະຜູ້ເປັນເຈົ້າ ຊົງສະແດງຕໍ່ຜູ້ປະກາດພຣະທຳ ຮາບາກຸກ.

### ຮາບາກຸກຮ້ອງຂໍຄວາມເປັນທຳ

2ໂອ ພຣະຜູ້ເປັນເຈົ້າ ກ່ອນພຣະອົງຈະຊ່ອຍຂ້ານ້ອຍໃຫ້ພົ້ນຈາກການທຳລາຍ ຂ້ານ້ອຍຈະ
ຕ້ອງຮ້ອງຂໍຄວາມຊ່ອຍເຫລືອຈາກພຣະອົງອີກດົນປານໃດ ພຣະອົງຈຶ່ງຈະຮັບຟັງຂ້ານ້ອຍ?
3ເປັນຫຍັງພຣະອົງ ຈຶ່ງຊົງເຮັດໃຫ້ຂ້ານ້ອຍພົບພໍ້ກັບຄວາມທຸກຍາກລຳບາກ ແລະເຄາະເຂັນ
ເຊັ່ນນີ້? ການທຳລາຍ ແລະການເຂັ່ນຂ້າທາລຸນຢູ່ອ້ອມຮອບຂ້ານ້ອຍ ການສູ້ຮົບຕົບຕີ ແລະ
ການຜິດຖຽງກັນມີຢູ່ທຸກຫົນທຸກແຫ່ງ.
4ກົດໝາຍຂາດຄວາມສັກສິດ ແລະບໍ່ມີປະໂຫຍດ ຄວາມຍຸດຕິທຳບໍ່ເຄີຍມີເລີຍ ສະນັ້ນ ຄົນ
ຊົ່ວຈຶ່ງໃຊ້ອຳນາດຂົ່ມເຫັງຄົນດີ ໂດຍບິດເບືອນຄວາມຍຸດຕິທຳ.

### ພຣະຜູ້ເປັນເຈົ້າຊົງຕອບຄວາມຮ້ອງທຸກ

5ຕໍ່ມາ ພຣະຜູ້ເປັນເຈົ້າຊົງເວົ້າຕໍ່ໄພ່ພົນຂອງພຣະອົງວ່າ, "ຈົ່ງເບິ່ງຊົນຊາດທັງຫລາຍອ້ອມ-
ແອ້ມເຈົ້າ ແລະເຈົ້າຈະປະຫລາດໃຈຕໍ່ສິ່ງທີ່ເຈົ້າເຫັນ ເພາະວ່າໃນສະໄໝຂອງເຈົ້າ ເຮົາຈະໃຫ້
ບາງສິ່ງເກີດຂຶ້ນ ແລະເມື່ອພວກເຈົ້າໄດ້ຍິນສິ່ງນັ້ນ ພວກເຈົ້າກໍຈະບໍ່ເຊື່ອ. 6ເຮົາພວມນຳຊາວ
ບາບີໂລນຄື ພວກທີ່ໂຫດຮ້າຍ ແລະໃຈຮ້ອນມາໃຫ້ມີອຳນາດ ພວກມັນກຳລັງອອກໄປຍຶດ
ແລະຄອບຄອງປະເທດທັງຫລາຍທົ່ວໂລກ. 7ສ້າງຄວາມຢ້ານກົວ ແລະຄວາມອົນລະຫົນຂຶ້ນທົ່ວ
ໄປ ໂດຍເປັນຜູ້ອອກກົດໝາຍ ແລະໃຊ້ກົດໝາຍເອງ.
8ມ້າຂອງພວກມັນແລ່ນໄວກວ່າເສືອດາວ ແລະຮ້າຍກວ່າໝາໄນທີ່ຫິວເຫຍື່ອ ທະຫານຂອງ
ພວກມັນຂີ່ມ້າຫອບມາແຕ່ໄກໆ ໄວເໝືອນແຫລວເຈີດໄປກິນເຫຍື່ອ. 9ກອງທັບຂອງພວກມັນບຸກ
ເຂົ້າຄອບຄອງຢ່າງຮ້າຍກາດ ເມື່ອມັນບຸກເຂົ້າມາໃກ້ ທຸກໆ ຄົນກໍຢ້ານກົວຕົວສັ່ນຈົນຂວັນເສຍ
ຊະເລີຍທີ່ມັນຈັບໄດ້ມີຫລາຍເໝືອນດັ່ງເມັດຊາຍ ຊຶ່ງບໍ່ສາມາດນັບໄດ້.
10ພວກມັນໝິ່ນປະໝາດບັນດາກະສັດ ແລະຫົວເຍາະເຍີ້ຍໃສ່ບັນດາມະຫາເສນາອາມາດ ມີ
ປ້ອມປ້ອງກັນບ່ອນໃດສາມາດຕ້ານທານການບຸກລຸກຂອງພວກມັນໄດ້ ມັນໃຊ້ວິທີການຍຶດປ້ອມ
ໂດຍກອງດິນຂຶ້ນໃຫ້ສູງເທົ່າປ້ອມແລ້ວກໍເຂົ້າຍຶດ. 11ເມື່ອຍຶດໄດ້ແລ້ວ ພວກມັນກໍກວາດເອົາສິ່ງ
ຂອງໄປໝົດເໝືອນລົມພັດຜ່ານເອົາໄປ ຄົນພວກນີ້ບູຊາອຳນາດຂອງຕົນເອງ."

### ຮາບາກຸກຮ້ອງທຸກຂໍຄວາມເປັນທຳ

12ໂອ! ພຣະຜູ້ເປັນເຈົ້າ ພຣະອົງເປັນພຣະເຈົ້າຕັ້ງແຕ່ໃດໆ ມາ ພຣະອົງເປັນພຣະເຈົ້າ
ຂອງຂ້ານ້ອຍ ເປັນພຣະເຈົ້າອົງບໍລິສຸດ ແລະອົງຊົງເປັນຢູ່ສືບໆ ໄປ ໂອ! ພຣະຜູ້ເປັນເຈົ້າ
ພຣະເຈົ້າອົງປົກປັກຮັກສາຂອງຂ້ານ້ອຍເອີຍ ພຣະອົງໄດ້ເລືອກເອົາພວກບາບີໂລນ ແລະໄດ້

ເຮັດໃຫ້ພວກມັນມີອຳນາດເພື່ອລົງໂທດພວກຂ້ານ້ອຍ.
[13]ແຕ່ເປັນຫຍັງພຣະອົງຈຶ່ງຊົງມິດງຽບຢູ່ ໃນເມື່ອພວກມັນທຳຮ້າຍຄົນດີໆ ກວ່າພວກມັນ?
[14]ດ້ວຍເຫດໃດພຣະອົງຈຶ່ງຖືປະຊາຊົນເໝືອນປາ ແລະເໝືອນສັດເລືອຄານ?
[15]ຊາວບາບີໂລນໄດ້ຈັບປະຊາຊົນເໝືອນຕຶກເບັດເອົາປາ ພວກມັນເອົາມອງກວາດເອົາປະ-
ຊາຊົນເໝືອນດັ່ງກວາດປາໃນມອງຂຶ້ນມາຈາກນໍ້າດ້ວຍສຽງໂຮຮ້ອງຍິນດີ.
[16]ພວກເຂົາບູຊາມອງ ແລະຖວາຍເຄື່ອງບະບົນໃຫ້ມັນ ເພາະວ່າມອງພາໃຫ້ພວກເຂົາໄດ້ໃຊ້
ຊີວິດຢູ່ຢ່າງຟູມເຟືອຍ.
[17]ພວກເຂົາຈະໃຊ້ດາບທຳຮ້າຍຊົນຊາດຕ່າງໆ ຢ່າງບໍ່ມີຄວາມເມດຕາແບບນີ້ຕະຫລອດໄປ
ບໍ?

# ບົດທີ 2

## ພຣະຜູ້ເປັນເຈົ້າຕອບຄຳຮ້ອງທຸກຂອງຮາບາກຸກ

[1]ຂ້າພະເຈົ້າຈະຂຶ້ນໄປຢືນທີ່ຫໍຄອຍ ແລະຖ້າຊອມເບິ່ງວ່າ ພຣະຜູ້ເປັນເຈົ້າຈະເວົ້າຫຍັງຕໍ່ຂ້າ-
ພະເຈົ້າ ແລະຂ້າພະເຈົ້າຈະໄດ້ຮັບຄຳຕອບຢ່າງໃດຈາກພຣະອົງກ່ຽວກັບການຮ້ອງທຸກນັ້ນ.
[2]ພຣະຜູ້ເປັນເຈົ້າໃຫ້ຄຳຕອບແກ່ຂ້າພະເຈົ້າວ່າ, “ຈົ່ງຂຽນເລື່ອງທີ່ເຮົາບອກແກ່ເຈົ້າທາງນິມິດ
ໃສ່ແຜ່ນປ້າຍ ໃຫ້ທຸກຄົນອ່ານເຂົ້າໃຈໄດ້ງ່າຍ ຂຽນນິມິດນີ້ໄວ້.
[3]ກໍເພາະວ່າສິ່ງທີ່ເຮົາບອກມານັ້ນ ຍັງບໍ່ເຖິງເວລາທີ່ຈະເກີດຂຶ້ນເປັນຈິງເທື່ອ ແຕ່ກຳນົດນັ້ນກໍ
ຈະມາເຖິງໃນໄວໆ ນີ້ ແລະສິ່ງທີ່ເຮົາໄດ້ບອກກັບເຈົ້າກໍຈະກາຍເປັນຈິງ ເຈົ້າອາດຈະຄິດວ່າມັນ
ມາຊ້າ ແຕ່ໃຫ້ຄອຍເບິ່ງເທາະ ມັນຈະມາຮອດຕາມເວລາທີ່ເຮົາໄດ້ກຳນົດໄວ້ ຍັງບໍ່ເທິງດອກ.
[4]ຂໍ້ຄວາມທີ່ເຈົ້າຂຽນນັ້ນມີດັ່ງນີ້ຄື “ຜູ້ທີ່ກະທຳຊົ່ວຈະບໍ່ມີຊີວິດ ແຕ່ຜູ້ທີ່ກະທຳດີຈະມີຊີວິດ
ເພາະວ່າລາວເຊື່ອຟັງພຣະເຈົ້າ.

## ເຄາະກຳຂອງຄົນຊົ່ວມາເຖິງ

[5]ຄວາມຮັ່ງມີເປັນສິ່ງຫລອກລວງ ຄົນໂລພາຈອງຫອງ ແລະມີໃຈຢາກໄດ້ເໝືອນກັບຄວາມ
ຢາກຕາຍທີ່ບໍ່ຮູ້ຈັກອີ່ມ ດັ່ງນັ້ນແຫລະ ພວກເຂົາຈຶ່ງເຂົ້າຄອບຄອງບັນດາຊົນຊາດທັງຫລາຍ
ເພື່ອຜົນປະໂຫຍດຂອງພວກເຂົາ.
[6]ບັນດາປະຊາຊາດເຫລົ່ານັ້ນຈະດ່າພວກທີ່ຂົ່ມເຫັງເຂົາ ແລະສະແດງພຶດຕິກຳອັນເປັນການ
ໝິ່ນປະໝາດໃສ່ພວກເຂົາ ພວກເຂົາຈະເວົ້າວ່າ, “ພວກມຶງໄດ້ເອົາຂອງຜູ້ອື່ນມາເປັນຂອງຕົນ
ແຕ່ແນວໃດດີ ເຄາະກຳຂອງພວກມຶງໃກ້ເຂົ້າມາຮອດແລ້ວ ພວກມຶງຈະຫາລໍ້າຫາລວຍນຳລູກໜີ້
ອີກດົນປານໃດ?”
[7]ກ່ອນພວກເຈົ້າຈະຮູ້ເມື່ອ ພວກລູກໜີ້ກໍຈະບຸກມາບີບບັງຄັບແລ້ວເອົາເຄື່ອງຄືນໄປ ສັດຕູຈະ
ບຸກເຂົ້າມາເຮັດໃຫ້ພວກເຈົ້າຢ້ານຈົນ ຕົວສັ່ນຂວັນເສຍ ພວກເຂົາຈະປຸ້ນເອົາຂອງພວກເຈົ້າ.
[8]ພວກເຈົ້າໄດ້ປຸ້ນປະຊາຊົນທັງຫລາຍຄື ໄດ້ຂ້າ ແລະໄດ້ກົດຂີ່ຂົ່ມເຫັງຊາວໂລກ ແລະທຳ-
ລາຍຫົວເມືອງຕ່າງໆ ບັດນີ້ ຜູ້ທີ່ຍັງມີຊີວິດຢູ່ກໍຈະປຸ້ນເຈົ້າຄືກັນ.

9 ເຄາະກຳຂອງເຈົ້າມາເຖິງແລ້ວ ພວກເຈົ້າໄດ້ເຮັດໃຫ້ຄອບຄົວຮັ່ງມີເປັນດີຂຶ້ນ ຍ້ອນເຂັ່ນຂ້າທາລຸນຄົນອື່ນ ແລ້ວພະຍາຍາມເຮັດໃຫ້ຄອບຄົວຢູ່ຢ່າງສະຫງົບສຸກແລະປອດໄພ.

10 ເລ່ກົນຂອງພວກເຈົ້າໄດ້ນຳຄວາມອັບອາຍມາສູ່ຄອບຄົວຂອງພວກເຈົ້າແລ້ວ ການທຳລາຍບັນດາຊົນຊາດຕ່າງໆ ນັ້ນ ມັນກໍເປັນແຕ່ພຽງການນຳເອົາຄວາມຈິບຫາຍມາສູ່ພວກເຈົ້າເອງ.

11 ແມ່ນແຕ່ກ້ອນຫີນໃນກຳແພງກໍຈະຮ້ອງດ່າຕໍ່ສູ້ພວກເຈົ້າ ແລະໄມ້ກອນເຮືອນກໍຈະສົ່ງສຽງດັງກຶກກ້ອງອອກມາ.

12 ເຄາະກຳຂອງພວກເຈົ້າມາເຖິງແລ້ວ ພວກເຈົ້າວາງຮາກຖານເມືອງດ້ວຍອາດຊະຍາກຳ ແລະສ້າງເມືອງຂຶ້ນດ້ວຍຄາດຕະກຳ.

13 ບັນດາຊົນຊາດທັງຫລາຍທີ່ພວກເຈົ້າເຂົ້າຄອບຄອງ ກໍຖືກໄຟໄໝ້ໝົດ ຍ້ອນພຣະຜູ້ເປັນເຈົ້າແຫ່ງຈັກກະວານໄດ້ເຮັດການນີ້.

14 ທະເລມີນໍ້າເຕັມຢູ່ສັນໃດ ຄວາມຮູ້ກ່ຽວກັບພຣະລັດສະໝີຄວາມຍິ່ງໃຫຍ່ຂອງພຣະຜູ້ເປັນເຈົ້າ ກໍຈະເຕັມຢູ່ໃນໂລກນີ້ສັນນັ້ນ.

15 ເຄາະກຳຂອງພວກເຈົ້າມາເຖິງແລ້ວ ເວລາພວກເຈົ້າໂກດຮ້າຍຫຍໍ້ຫຍັນເພື່ອນບ້ານ ແລະເຮັດໃຫ້ພວກເຂົາເສື່ອມເສຍ ແລະໄດ້ຮັບຄວາມອັບອາຍຂາຍໜ້າ.

16 ພວກເຈົ້າຈະອັບອາຍຂາຍໜ້າແທນທີ່ຈະໄດ້ຮັບກຽດຕິຍົດ ພຣະຜູ້ເປັນເຈົ້າຈະມອບຈອກຊຶ່ງເປັນການລົງໂທດນີ້ ໃຫ້ພວກເຈົ້າດື່ມ ແລ້ວກຽດຕິຍົດຂອງພວກເຈົ້າກໍຈະເສື່ອມເສຍໄປ.

17 ພວກເຈົ້າປ້ຳໄມ້ໃນປ່າເລບານອນລົງສັນໃດ ພວກເຈົ້າກໍຈະຖືກປ້ຳລົງສັນນັ້ນ ພວກເຈົ້າໄດ້ຂ້າສັດໃນປ່າແລະບັດນີ້ສັດນັ້ນ ກໍຈະເຮັດໃຫ້ພວກເຈົ້າຢ້ານ ເຫດການເຫລົ່ານີ້ແຫລະຈະເກີດຂຶ້ນກໍຍ້ອນວ່າ ພວກເຈົ້າໄດ້ຂ້າແລະກົດຂີ່ຂົ່ມເຫັງຊາວໂລກ ແລະທຳລາຍຫົວເມືອງຕ່າງໆ.

18 ຮູບເຄົາລົບໃຫ້ຜົນປະໂຫຍດຫຍັງແດ່? ມັນເປັນພຽງແຕ່ຮູບທີ່ມະນຸດຜູ້ໜຶ່ງໄດ້ເຮັດຂຶ້ນເທົ່ານັ້ນ ແລະບໍ່ສາມາດບອກຄວາມຈິງຕໍ່ພວກເຈົ້າໄດ້ ມັນດີແນວໃດ? ຜູ້ສ້າງຮູບຈຶ່ງປົງໃຈໃນຮູບທີ່ປາກບໍ່ໄດ້ນັ້ນ.

19 ເຄາະກຳພວກເຈົ້າມາເຖິງແລ້ວ ພວກເຈົ້າເວົ້າຕໍ່ຮູບໄມ້ວ່າ, “ລຸກຂຶ້ນແມ” ຫລືເວົ້າຕໍ່ກ້ອນຫີນວ່າ, “ຢືນຂຶ້ນແມ” ແຕ່ຮູບເຄົາລົບນັ້ນສອນຫຍັງແດ່ ຮູບນັ້ນຈະໂອບດ້ວຍເງິນ ຫລືຄຳ ແຕ່ມັນກໍບໍ່ມີຊີວິດຈິດໃຈເລີຍ.

20 ພຣະຜູ້ເປັນເຈົ້າຊົງປະທັບຢູ່ໃນພຣະວິຫານອັນສັກສິດ ມະນຸດທຸກຄົນໃນໂລກນີ້ຈົ່ງມິດງຽບຢູ່ຕໍ່ພຣະພັກພຣະຜູ້ເປັນເຈົ້າເທີ້ນ.

# ບົດທີ 3

## ຄຳອ້ອນວອນຂອງຮາບາກຸກ

1 ຄຳອ້ອນວອນຂອງຜູ້ປະກາດພຣະທຳຮາບາກຸກ.

2 ໂອພຣະຜູ້ເປັນເຈົ້າຂ້ານ້ອຍໄດ້ຍິນກ່ຽວກັບສິ່ງທີ່ພຣະອົງໄດ້ເຮັດ
ແລະຂ້ານ້ອຍໄດ້ເຕັມໄປດ້ວຍຄວາມຢຳເກງ
ບັດນີ້ ຂໍຊົງຮື້ຟື້ນພຣະລາຊະກິດຂອງພຣະອົງຂຶ້ນໃໝ່

ໃນເວລາທີ່ພວກຂ້ານ້ອຍຍັງມີຊີວິດຢູ່ ຄື
ການກະທຳອັນຍິ່ງໃຫຍ່ທີ່ພຣະອົງໄດ້ເຄີຍເຮັດແຕ່ສະໄໝກ່ອນ
ແມ່ນວ່າຍາມພຣະອົງພຣະພິໂລດ ຂໍຊົງເມດຕາແດ່ທ້ອນ.
3 ພຣະເຈົ້າຈະກັບມາຈາກເມືອງເຕມານອີກ
ພຣະເຈົ້າອົງບໍລິສຸດຈະມາແຕ່ພູປາຣານ
ຄວາມສະຫງ່າລາສີຂອງພຣະອົງປົກຄຸມທົ່ວຟ້າສະຫວັນ
ທົ່ວໂລກກໍເຕັມໄປດ້ວຍການສັນລະເສີນພຣະອົງ.
4 ພຣະອົງສະເດັດມາພ້ອມແສງສະຫວ່າງຂອງຟ້າແມບເຫລື້ອມ
ພຣະຫັດຂອງພຣະອົງມີແສງເຫລື້ອມມາບໆ
ຊຶ່ງລິດທານຸພາບຂອງພຣະອົງໄດ້ເຊື່ອງໄວ້ໃນທີ່ນັ້ນ.
5 ພຣະອົງໃຫ້ໂລກລະບາດມາກ່ອນ
ແລະໃຫ້ຄວາມຕາຍມາຕາມຫລັງ.
6 ເມື່ອພຣະອົງຊົງຢຸດ ໂລກກໍເກີດຫວັ່ນໄຫວ
ເມື່ອພຣະອົງຊົງທອດພຣະເນດ ບັນດາຊົນຊາດກໍຢ້ານ
ຈົນຕົວສັ່ນຂວັນເສຍ
ບັນດາພູເຂົາທີ່ໝັ້ນຄົງກໍຈະແຕກສະຫລາຍໄປ
ແລະເນີນພູທີ່ຕັ້ງຢູ່ຕະຫລອດການກໍຈະຍຸບລົງ
ຄື ເນີນພູບ່ອນທີ່ພຣະອົງໄດ້ຍ່າງແຕ່ສະໄໝດຶກດຳບັນ.
7 ຂ້ານ້ອຍໄດ້ເຫັນພົນລະເມືອງກູຊານຢ້ານກົວ
ແລະພົນລະເມືອງມີດີອານຕົວສັ່ນຂວັນເສຍ.
8 ຂ້າແດ່ພຣະຜູ້ເປັນເຈົ້າ ເມື່ອພຣະອົງສະເດັດຊົງລົດມ້າທີ່ເປັນເຜືອ
ຜ່ານໄປທ່າມກາງກ້ອນເມກ
ເພື່ອນຳໄຊຊະນະມາສູ່ໄພ່ພົນຂອງພຣະອົງ
ພຣະອົງຊົງພຣະພິໂລດແມ່ນ້ຳບໍ?
ຫລືວ່າຊົງໂກດຮ້າຍນ້ຳທະເລ?
9 ພຣະອົງຊົງພ້ອມທີ່ຈະໃຊ້ໜ້າທະນູຂອງພຣະອົງທຸກເວລາ
ລູກໜ້າຂອງພຣະອົງກໍເຕັມບັ້ງຢູ່ສະເໝີ
ຟ້າຜ່າແຍກແຜ່ນດິນໂລກອອກຈາກກັນໄດ້.
10 ເມື່ອພູເຂົາທັງຫລາຍໄດ້ເຫັນພຣະອົງກໍສັ່ນສະເທືອນ
ແລ້ວຝົນກໍຈະຫລັ່ງລົງຈາກທ້ອງຟ້າ
ນ້ຳຢູ່ໃຕ້ພື້ນພິພົບກໍຊັດຂຶ້ນສຽງດັງສະໜັ່ນ
ແລະຟອງຂອງມັນກໍຟົ້ງຂຶ້ນສູງ.
11 ດວງຕາເວັນ ແລະດວງເດືອນຍັງຢູ່ກັບບ່ອນຂອງມັນ

ເມື່ອແສງແວບວາບຂອງທະນູ
ແລະແສງສະທ້ອນຂອງຫອກຂອງພຣະອົງພຸ່ງຜ່ານໄປ.
12 ພຣະອົງສະເດັດເທິງໂລກດ້ວຍຄວາມພິໂລດ
ແລະຢຽບຢ່ຳຊົນຊາດທັງຫລາຍດ້ວຍຄວາມໂກດຮ້າຍ.
13 ພຣະອົງສະເດັດອອກໄປຊ່ອຍໄພ່ພົນ
ແລະເຈົ້າຊີວິດທີ່ພຣະອົງເລືອກໄວ້
ພຣະອົງຊົງທຳລາຍຜູ້ນຳຂອງຄົນຊົ່ວ
ແລະລ້າງຜານພັກພວກຂອງມັນຈົນໝົດກ້ຽງ.
14 ລູກໜ້າທະນູຂອງພຣະອົງແທງຫົວໜ້ານັກຮົບຂອງມັນ
ຊຶ່ງບຸກເຂົ້າມາເໝືອນລົມພະຍຸພັດ
ແລະເໝືອນຄົນມັກຂົ່ມເຫັງຄົນຍາກຈົນຢ່າງລັບໆ
ເພື່ອເຮັດໃຫ້ພວກເຮົາແຕກແຍກກະຈັດກະຈາຍໄປ.
15 ມ້າຂອງພຣະອົງຢຽບຢ່ຳນ້ຳທະເລ
ນ້ຳເລິກ ແລະກວ້າງອັນມະຫາສານຟົດຟື້ງຂຶ້ນ.
16 ເມື່ອຂ້ານ້ອຍໄດ້ຍິນເລື່ອງເຫລົ່ານີ້ ຂ້ານ້ອຍກໍຢ້ານ
ຈົນຕົວສັ່ນຂວັນເສຍ
ຮີມສົບຂອງຂ້ານ້ອຍກໍສັ່ນດ້ວຍຄວາມຢ້ານ
ຕົນຕົວຂອງຂ້ານ້ອຍສັ່ນຄອນໄປ
ແລະຕີນຂອງຂ້ານ້ອຍກໍເຕະສະດຸດ
ຂ້ານ້ອຍຈະລໍຄອຍວັນທີ່ພຣະອົງຈະມາຢ່າງມິດໆ
ວັນຊຶ່ງ ພຣະເຈົ້າ ຈະລົງໂທດຜູ້ທີ່ໂຈມຕີພວກຂ້ານ້ອຍ.
17 ເຖິງແມ່ນວ່າຕົ້ນໝາກເດື່ອບໍ່ມີໝາກ
ແລະຕົ້ນໝາກອະງຸ່ນບໍ່ມີຮວງ
ຕົ້ນໝາກກອກເທດບໍ່ມີຜົນ
ແລະທົ່ງນາບໍ່ມີເຂົ້າ
ເຖິງແມ່ນວ່າ ແກະໃນຝູງຈະຕາຍໝົດ
ແລະຄອກງົວຈະເປົ່າວ່າງ.
18 ຂ້ານ້ອຍຍັງຈະຊົມຊື່ນປິຕິຍິນດີ
ເພາະວ່າພຣະຜູ້ເປັນເຈົ້າ ເປັນ ພຣະຜູ້ຊ່ອຍ ຂອງຂ້ານ້ອຍ.
19 ພຣະຜູ້ເປັນເຈົ້າ ຊົງປະທານເຫື່ອແຮງໃຫ້ຂ້ານ້ອຍ
ພຣະອົງເຮັດໃຫ້ຂ້ານ້ອຍແລ່ນໄວເໝືອນກວາງ
ແລະໃຫ້ຂ້ານ້ອຍຍ່າງເທິງພູຢ່າງປອດໄພ.

# ເຊຟານີຢາ

## ບົດທີ 1

### ຢູດາຈະຖືກກວາດໄປເປັນຊະເລີຍໃນອະນາຄົດ

1ພຣະທຳຂອງ ພຣະຜູ້ເປັນເຈົ້າ ໄດ້ມາເຖິງ ເຊຟານີຢາ ລູກຊາຍ ກູຊີ ຜູ້ເປັນລູກຊາຍ ເກດາລີ-
ຢາ ຜູ້ເປັນລູກຊາຍ ອາມາຣີຢາ ຜູ້ເປັນລູກຊາຍຂອງ ເຮເຊກີຢາ ໃນລາຊະການ ໂຢສີຢາ ລູກ
ຊາຍຂອງ ອາໂມນ ກະສັດແຫ່ງຢູດາ
2ພຣະຜູ້ເປັນເຈົ້າ ກ່າວວ່າ “ເຮົາຈະທຳລາຍທຸກສິ່ງທຸກຢ່າງໃຫ້ໝົດກ້ຽງ ຈາກພື້ນ ແຜ່ນດິນ
ໂລກ” 3ພຣະຜູ້ເປັນເຈົ້າກ່າວວ່າ “ເຮົາຈະທຳລາຍມະນຸດ ແລະສັດເດຍລະສານ, ເຮົາຈະທຳ-
ລາຍຝູງນົກໃນອາກາດ ພ້ອມທັງປາທັງຫລາຍໃນທະເລ, ເຮົາຈະທຳລາຍລ້າງສິ່ງທີ່ກີດຂວາງ
ພ້ອມກັບຄົນຊົ່ວຊ້າ ເຮົາຈະຕັດມະນຸດອອກຈາກພື້ນແຜ່ນດິນ. 4“ແລະເຮົາຈະຢຽດມືຂອງເຮົາ
ອອກຕໍ່ສູ້ຢູດາ ແລະຊາວ ເຢຣູຊາເລັມ ທັງປວງ, ເຮົາຈະຕັດວັດຖຸສິ່ງຂອງທີ່ເຫລືອຢູ່ຂອງ ພະ-
ບາອານ ອອກຈາກສະຖານທີ່ແຫ່ງນີ້ ແລະກຳຈັດຊື່ຂອງບັນດາປະໂລຫິດຂອງ ພະບາອານ
5ແລະກຳຈັດ ຈຳພວກຄົນທີ່ຂາບລົງ ເທິງດາດຟ້າຫລັງຄາ ເຮືອນ ເພື່ອຂາບ ໄຫວ້ກອງທັບ ແຫ່ງຟ້າ
ສະຫວັນ ແລະຄົນ ທັງຫລາຍທີ່ຂາບລົງຕໍ່ພຣະພັກ ພຣະຜູ້ເປັນເຈົ້າ ທີ່ສາບານດ້ວຍພຣະອົງ
ແລະຍັງສາບານໂດຍ ພະໂມເລັກ 6ຄົນເຫລົ່ານັ້ນທີ່ຖອຍຫລັງໜີຈາກ ພຣະຜູ້ເປັນເຈົ້າ ແລະຈຳ-
ພວກຄົນທີ່ບໍ່ໄດ້ສະແຫວງຫາ ພຣະຜູ້ເປັນເຈົ້າ ແລະບໍ່ໄດ້ສືບຖາມພຣະອົງ”
7ຈົ່ງມິດສະຫງົບຢູ່ຕໍ່ພຣະພັກອົງ ພຣະຜູ້ເປັນເຈົ້າ ເພາະວ່າວັນຂອງ ພຣະຜູ້ເປັນເຈົ້າ ມາໃກ້
ແລ້ວ, ພຣະຜູ້ເປັນເຈົ້າ ຈັດຕຽມເຄື່ອງບູຊາ, ພຣະອົງໄດ້ເຊື້ອເຊີນແຂກທັງຫລາຍຂອງພຣະອົງ
8ແລະຕໍ່ມາໃນວັນບູຊາຂອງ ພຣະຜູ້ເປັນເຈົ້າ ນັ້ນ, ພຣະອົງກ່າວວ່າ “ເຮົາຈະລົງໂທດບັນດາເຈົ້າ
ນາຍ ແລະລູກຊາຍຂອງກະສັດ ແລະບັນດາຜູ້ທີ່ນຸ່ງຫົ່ມເສື້ອຜ້າຕ່າງດ້າວ 9ໃນວັນນັ້ນກໍເໝືອນ
ກັນ ເຮົາຈະລົງໂທດທຸກຄົນທີ່ເຕັ້ນຂ້າມປະຕູ ແລະບັນດາຜູ້ທີ່ເຮັດໃຫ້ເຮືອນຂອງນາຍ ເຕັມໄປ
ດ້ວຍຄວາມໂຫດຮ້າຍທາລຸນ ແລະການລໍ້ລວງຄົດໂກງ”
10ພຣະຜູ້ເປັນເຈົ້າກ່າວວ່າ “ຕໍ່ມາໃນວັນນັ້ນຈະໄດ້ຍິນສຽງຮ້ອງອອກມາຈາກປະຕູປາ ແລະ
ສຽງຄໍ່າຄວນມາຈາກເມືອງທີສອງ ແລະສຽງອຶກກະທຶກນຶກນອງຈາກໂນນພູ 11ໂອ ຊາວເມືອງ
ມາກເຕດ ຈົ່ງຮ້ອງໄຫ້ເຖີດ ເພາະພໍ່ຄ້າທັງຫລາຍກໍບໍ່ມີເຫລືອແລ້ວ ຜູ້ທີ່ຊັ່ງເງິນຄ້າຂາຍກໍຖືກຕັດ
ອອກໄປແລ້ວ (ເຫດວ່າຊາວຄານາອານທັງປວງຈະຈິບຫາຍໄປ ຄົນທັງປວງທີ່ມີເງິນຫລາຍຈະ
ຈິບຫາຍໄປ) 12ຕໍ່ມາໃນຄາວນັ້ນ ເຮົາຈະເອົາຕະກຽງສ່ອງເບິ່ງ ເຢຣູຊາເລັມ ແລະເຮົາຈະລົງ-
ໂທດຈຳພວກຄົນທີ່ນອນຢູ່ເທິງຂີ້ເຫລົ້າອະງຸ່ນຂອງພວກເຂົາ ຊຶ່ງຄຶດໃນໃຈຂອງຕົນວ່າ ‘ພຣະຜູ້-
ເປັນເຈົ້າ ຈະບໍ່ກະທຳການດີ ແລະພຣະອົງກໍຈະບໍ່ກະທຳການຮ້າຍ’ 13ຊັບສິ່ງຂອງຂອງພວກເຂົາ
ຈະຖືກປຸ້ນໄປ ແລະເຮືອນຂອງພວກເຂົາຈະຮ້າງເປົ່າ ແລະບັນດາເຮືອນທີ່ພວກເຂົາໄດ້ປຸກຂຶ້ນ
ມານັ້ນ, ພວກເຂົາກໍຈະບໍ່ໄດ້ອາໃສຢູ່ໃນເຮືອນເຫລົ່ານັ້ນ ເຖິງພວກເຂົາຈະເຮັດສວນອະງຸ່ນ

ພວກ ເຂົາຈະບໍ່ໄດ້ດື່ມນໍ້າອະງຸ່ນຈາກສວນນັ້ນ"
[14]ວັນສຳຄັນອັນໃຫຍ່ຂອງ ພຣະຜູ້ເປັນເຈົ້າ ໄດ້ມາໃກ້ແລ້ວ, ໃກ້ເຂົ້າມາ ແລະໄວຫລາຍ ສຽງ
ແຫ່ງວັນຂອງ ພຣະຜູ້ເປັນເຈົ້າ ນັ້ນຄື: ຊາຍຜູ້ທີ່ມີໃຈກ້າຫານຈະຮ້ອງຢ່າງຂົມຂື່ນໃຈໃນບ່ອນນັ້ນ
[15]ວັນນັ້ນເປັນວັນແຫ່ງພຣະພິໂລດ, ເປັນວັນແຫ່ງຄວາມທຸກໃຈ ແລະເປັນວັນຂັດສົນ, ເປັນວັນ
ແຫ່ງການທຳລາຍ ແລະຮ້າງເປົ່າ, ເປັນວັນແຫ່ງຄວາມມືດມົວ ແລະຄວາມມືດຄຶ້ມ, ເປັນວັນທີ່ມີ
ເມກ ແລະຄວາມມືດທຶບ [16]ເປັນວັນທີ່ມີສຽງແກອັນດັງຕໍ່ສູ້ບັນດາເມືອງທີ່ມີປ້ອມປ້ອງກັນ ແລະ
ຕໍ່ສູ້ທໍຄອຍສູງໆ [17]ເຮົາຈະນຳຄວາມຂັດສົນມາສູ່ມວນມະນຸດ ແລະພວກເຂົາຈະໄດ້ຍ່າງໄປ
ເໝືອນຄົນຕາບອດ ເພາະພວກເຂົາໄດ້ເຮັດບາບຕໍ່ ພຣະຜູ້ເປັນເຈົ້າ ແລະເລືອດຂອງພວກເຂົາ
ຈະຖືກຖອກລົງຄືຂີ້ຝຸ່ນດິນ ແລະເນື້ອໜັງຂອງພວກເຂົາຈະກະຈາຍໄປເໝືອນອາຈົມ [18]ເງິນຄຳ
ຂອງພວກເຂົາຈະບໍ່ສາມາດຊ່ວຍພວກເຂົາໃຫ້ພົ້ນໄດ້ໃນວັນແຫ່ງພຣະພິໂລດຂອງ ພຣະຜູ້ເປັນ-
ເຈົ້າ ແຜ່ນດິນທັງໝົດຈະຖືກເຜົາຜານດ້ວຍໄຟແຫ່ງພຣະພິໂລດຂອງພຣະອົງ, ພຣະອົງຈະເຮັດ
ໃຫ້ຊາວພື້ນແຜ່ນດິນທັງໝົດເຖິງທີ່ສິ້ນສຸດ ເອີ ເຖິງທີ່ສິ້ນສຸດຢ່າງກະທັນຫັນ.

# ບົດທີ 2

## ທຸກຄົນທີ່ຖ່ອມໃຈລົງຈົ່ງສະແຫວງຫາພຣະຜູ້ເປັນເຈົ້າ

[1]ໂອ ປະຊາຊາດທີ່ບໍ່ຮູ້ຈັກອັບອາຍເອີຍ ຈົ່ງມາຮ່ວມຊຸມນຸມກັນ [2]ກ່ອນທີ່ພຣະບັນຊາຈະອອກ
ໄປ, ກ່ອນທີ່ວັນນັ້ນຈະຜ່ານໄປເໝືອນແກບທີ່ປິວ, ກ່ອນທີ່ວັນແຫ່ງພຣະພິໂລດທີ່ຮ້າຍແຮງຂອງ
ພຣະຜູ້ເປັນເຈົ້າ ຈະລົງມາເໜືອພວກເຈົ້າ [3]ທຸກຄົນທີ່ມີຈິດໃຈຖ່ອມລົງໃນແຜ່ນດິນນີ້ ຄືຜູ້ທີ່ເຮັດ
ຕາມຄຳຕັດສິນຂອງພຣະອົງ ຈົ່ງສະແຫວງຫາຄວາມຍຸດຕິທຳ ຈົ່ງສະແຫວງຫາ ພຣະຜູ້ເປັນເຈົ້າ
ຈົ່ງສະແຫວງຫາຄວາມຊອບທຳ ສະແຫວງຫາຄວາມຖ່ອມໃຈ ຊຶ່ງມັນຈະປົກບັງເຈົ້າໃຫ້ລອດພົ້ນ
ໃນວັນແຫ່ງພຣະພິໂລດຂອງ ພຣະຜູ້ເປັນເຈົ້າ ຖ້ອຍຄຳຂອງຜູ້ປະກາດພຣະທຳກ່ຽວກັບການພິ-
ພາກສາຕໍ່ເມືອງ ຄາຊາ ໂມອາບ ອຳໂມນ ແລະ ເອທີໂອເປຍ
[4]ເພາະວ່າ ເມືອງ ຄາຊາ ຈະ ຖືກປະ ຖິ້ມ ແລະ ເມືອງ ອາຊະກາໂລນ ຈະ ເປັນ ເມືອງທີ່ຮ້າງ ເປົ່າ
ຊາວເມືອງ ອາຊະໂດດ ຈະຖືກຂັບໄລ່ໜີໃນເວລາທ່ຽງວັນ ແລະເມືອງ ເອັກໂຣນ ຈະຖືກຖອນຮາກ
[5]ວິບັດແກ່ພວກເຈົ້າ ຊາວເມືອງທີ່ຢູ່ແຄມທະເລເອີຍ ເຈົ້າຜູ້ເປັນປະຊາຊາດ ເກເຣັດ ພຣະທຳ
ຂອງ ພຣະຜູ້ເປັນເຈົ້າ ກ່າວຕໍ່ສູ້ພວກເຈົ້າ ໂອ ການາອານ ແຜ່ນດິນຂອງຄົນ ຟີລິດສະຕິນ ເອີຍ
ເຮົາຈະທຳລາຍເຈົ້າຈົນບໍ່ມີຊາວເມືອງ ຫລົງເຫລືອຢູ່ [6]ຕາຝັ່ງທະເລນັ້ນຈະເປັນເດີ່ນຫຍ້າ ແລະ
ເປັນທົ່ງຫຍ້າສຳລັບພວກຜູ້ລ້ຽງແກະ ແລະເປັນຄອກສຳລັບຝູງແກະ [7]ແຄມທະເລນັ້ນຈະຕົກເປັນ
ຂອງເຊື້ອສາຍຢູດາທີ່ເຫລືອຢູ່ ພວກເຂົາຈະລ້ຽງຝູງສັດຢູ່ບ່ອນນັ້ນ ເມື່ອເຖິງເວລາແລງມາພວກ
ເຂົາກໍຈະພັກຜ່ອນນອນລົງໃນບັນດາເຮືອນຂອງຊາວ ອາຊະກາໂລນ ເພາະວ່າ ພຣະຜູ້ເປັນເຈົ້າ
ພຣະເຈົ້າ ຂອງພວກ ເຂົາຈະຢ້ຽມຢາມພວກ ເຂົາ ແລະ ໃຫ້ພວກ ເຂົາກັບ ຈາກການ ເປັນຊະເລີຍ
[8]"ເຮົາໄດ້ຍິນຄຳປະຈານຂາຍໜ້າຂອງ ໂມອາບ ແລະຄຳປ້ອຍດ່າຂອງລູກຫລານ ອຳໂມນ ແລ້ວ
ຊຶ່ງພວກເຂົາດ່າປະຈານຂາຍໜ້າປະຊາຊົນຂອງເຮົາ ແລະຍົກຍໍຕົວຂຶ້ນດ້ວຍໃຈອວດອົ່ງທະນົງ

ຕົວຕໍ່ສູ້ໃນເລື່ອງເຂດແດນຂອງພວກເຂົາ” 9ພຣະຜູ້ເປັນເຈົ້າແຫ່ງຈັກກະວານ ພຣະເຈົ້າຂອງອິ-
ສຣາເອນກ່າວວ່າ “ເຫດສະນັ້ນ ເຮົາມີຊີວິດຢູ່ແນ່ນອນສັນໃດ ໂມອາບຈະກາຍເປັນເໝືອນ
ເມືອງໂຊໂດມ ແລະລູກຫລານຊາວອຳໂມນຈະເປັນເໝືອນເມືອງໂກໂມຣາ ເປັນປ່າຫຍ້າຄັນ
ຄາຍ, ເປັນບໍ່ເກືອ ແລະເປັນບ່ອນຮ້າງເປົ່າຕະຫລອດໄປເປັນນິດ ຊົນຊາດທັງຫລາຍຂອງເຮົາ
ທີ່ເຫລືອຢູ່ຈະປຸ້ນສະດົມພວກເຂົາ ແລະປະຊາຊົນຂອງເຮົາທີ່ເຫລືອຢູ່ນັ້ນຈະຍຶດເອົາພວກເຂົາມາ
ເປັນກຳມະສິດ” 10ການນີ້ຈະເປັນຜົນຕອບແທນຄວາມຈອງຫອງຂອງພວກເຂົາ ເພາະພວກເຂົາ
ໄດ້ດ່າປະຈານຂາຍໜ້າ ແລະ ຍົກຍໍຕົວຂຶ້ນຕໍ່ສູ້ປະຊາຊົນຂອງພຣະຜູ້ເປັນເຈົ້າແຫ່ງຈັກກະວານ
11ພຣະຜູ້ເປັນເຈົ້າຈະເປັນທີ່ໜ້າຢຳເກງຕໍ່ສູ້ພວກເຂົາ ພຣະອົງຈະທຳລາຍພະທັງຫລາຍຂອງ
ໂລກ ຮ່ວມທັງເກາະຂອງປະຊາຊາດທັງໝົດ ແລະມະນຸດທັງປວງຈະນະມັດສະການພຣະອົງ
ຕາມຖິ່ນຖານຂອງຕົນ 12ໂອ ຄົນເອທີໂອເປຍເອີຍ ພວກເຈົ້າກໍເໝືອນກັນຈະຕ້ອງຖືກປະຫານ
ດ້ວຍດາບຂອງເຮົາ 13ແລ້ວພຣະອົງຈະຢື່ນພຣະຫັດຂອງພຣະອົງອອກທາງທິດເໜືອ ແລະທຳ-
ລາຍປະເທດອັດຊີເຣຍ ແລະຈະເຮັດໃຫ້ເມືອງນີເນເວເປັນບ່ອນຮ້າງເປົ່າ ເປັນບ່ອນແຫ້ງແລ້ງ
ເໝືອນຖິ່ນແຫ້ງແລ້ງກັນດານ 14ບັນດາຝູງສັດຈະນອນຢູ່ໃນເຄິ່ງກາງບ່ອນນັ້ນ ສັດປ່າຂອງປະ-
ຊາຊາດທັງປວງ, ນົກເຄົ້າ ແລະນົກກະສາຈະອາໄສຢູ່ເທິງຫົວເສົາທັງຫລາຍຂອງເມືອງນັ້ນ
ສຽງຂອງພວກມັນຈະມາຮ້ອງຢູ່ທີ່ປ່ອງຢ້ຽມ ຄວາມຮ້າງເປົ່າຈະຢູ່ທີ່ປະຕູ ເພາະພຣະອົງຈະໃຫ້ຝາ
ເຮືອນທີ່ເຮັດດ້ວຍໄມ້ແປກຕາກແດດຕາກຝົນ 15ນີ້ເປັນເມືອງທີ່ມີຄວາມຊົມຊື່ນຍິນດີທີ່ຢູ່ຢ່າງ
ປອດໄພ, ເປັນເມືອງທີ່ຄິດໃນໃຈຂອງຕົນວ່າ “ຂ້ອຍນີ້ແຫລະ ແລະນອກຈາກຂ້ອຍ ບໍ່ມີເມືອງ
ອື່ນໃດອີກ” ມັນເປັນເມືອງຮ້າງເປົ່າ, ເປັນບ່ອນອາໄສ ແລະເປັນບອນນອນຂອງສັດປ່າໄດ້ຈັ່ງ
ໃດ! ທຸກຄົນທີ່ຜ່ານເມືອງນີ້ໄປຈະຫຍໍ້ຫຍັນ ແລະສັ່ນມືຂອງພວກເຂົາ

# ບົດທີ 3

## ຄວາມບາບຂອງພວກຜູ້ພິພາກສາ, ຜູ້ປະກາດພຣະທຳແລະປະໂລຫິດແຫ່ງເມືອງເຢຣູຊາເລັມ

1ວິບັດແກ່ເມືອງນີ້ທີ່ເປັນເມືອງກະບົດ ແລະເປັນມົນທິນ, ເປັນເມືອງທີ່ບີບບັງຄັບ 2ເມືອງນີ້ບໍ່
ຍອມເຊື່ອຟັງສຽງໃດໆ ແລະບໍ່ຍອມຮັບການຕີສອນໃດໆ ເມືອງນີ້ບໍ່ວາງໃຈໃນພຣະຜູ້ເປັນເຈົ້າ
ແລະເມືອງນີ້ບໍ່ຫຍັບເຂົ້າມາໃກ້ພຣະເຈົ້າຂອງຕົນ 3ເຈົ້ານາຍຂອງເມືອງນີ້ກໍເໝືອນໂຕສິງທີ່ແຜດ
ສຽງຮ້ອງ, ຜູ້ພິພາກສາຂອງເມືອງນີ້ກໍເໝືອນໝາປ່າໃນຍາມ ກາງຄືນ ຊຶ່ງບໍ່ແຫ້ນກະດູກຈົນກົ່ວ
ຈະເຖິງຮຸ່ງເຊົ້າ 4ຜູ້ປະກາດພຣະທຳຂອງເມືອງນີ້ເປັນຄົນສໍ້ໂກງ, ເປັນຄົນທໍລະຍົດ ບັນດາປະ-
ໂລຫິດຂອງເມືອງນີ້ກໍເຮັດໃຫ້ສະຖານທີ່ບໍລິສຸດນັ້ນເປື້ອນເປິ, ພວກເຂົາກະທຳການຝ່າຝືນຕໍ່
ພຣະບັນຍັດ 5ພຣະຜູ້ເປັນເຈົ້າອົງຊອບທຳດຳລົງຢູ່ໃນທ່າມກາງເມືອງນີ້ ພຣະອົງບໍ່ໄດ້ກະທຳ
ການອະທຳເລີຍ ທຸກເຊົ້າພຣະອົງໃຫ້ການຕັດສິນຂອງພຣະອົງນັ້ນຍຸດຕິທຳ, ພຣະອົງປາກົດ
ແຈ້ງ, ພຣະອົງບໍ່ເຮັດການອະທຳເລີຍ ແຕ່ຄົນອະທຳບໍ່ຮູ້ຈັກອັບອາຍ 6“ເຮົາໄດ້ຕັດປະຊາຊາດ
ທັງຫລາຍອອກໄປແລ້ວ ປ້ອມປ້ອງກັນຂອງພວກເຂົາກໍພັງທະລາຍລົງແລ້ວ ເຮົາເຮັດໃຫ້ບັນດາ

ຖະໜົນໃນເມືອງນັ້ນຮ້າງເປົ່າຈົນບໍ່ມີຜູ້ໃດຫຍ່າງທາງນັ້ນ ຫົວເມືອງຕ່າງໆຂອງພວກເຂົາຖືກເພພັງ
ປະຖິ້ມໃຫ້ຮ້າງ ບໍ່ມີຄົນ ແລະບໍ່ມີຊາວເມືອງເຫລືອຢູ່ [7]ເຮົາກ່າວວ່າ 'ແທ້ຈິງ ຈົ່ງຢຳເກງເຮົາເທົ່າ
ນັ້ນ ຈົ່ງຍອມຮັບເອົາຄຳສັ່ງສອນ' ເພື່ອບ່ອນອາໄສຂອງພວກເຂົາ ຈະບໍ່ຖືກມ້າງເພ ເຖິງແມ່ນ
ວ່າເຮົາໄດ້ລົງໂທດພວກເຂົາຢ່າງໃດຢ່າງໜຶ່ງ ພວກເຂົາພັດລຸກຂຶ້ນແຕ່ເຊົ້າ ແລະເຮັດກິດຈະ-
ການທີ່ຊົ່ວຮ້າຍຂອງພວກເຂົາ"

## ບັນດາສັດຕູຂອງເຢຣູຊາເລັມຈະຕ້ອງຖືກລົງໂທດ

[8]ພຣະຜູ້ເປັນເຈົ້າຈຶ່ງກ່າວວ່າ "ເຫດສະນັ້ນ ຈົ່ງຄອຍຖ້າເຮົາຈົນເຖິງວັນທີ່ເຮົາຈະລຸກຂຶ້ນເພື່ອ
ຈະຍຶດເອົາສິ່ງຂອງ ເພາະວ່າເຮົາໄດ້ໝາຍໃຈວ່າຈະທ້ອນໂຮມປະຊາຊາດໄວ້ ແລະຈະເຮັດໃຫ້
ລາຊະອານາຈັກທັງຫລາຍ ຊຸມນຸມກັນເພື່ອຈະຖອກຄວາມຄຽດຮ້າຍຂອງເຮົາເທິງພວກເຂົາ ຄື
ຄວາມຮ້ອນແຮງແຫ່ງຄວາມຮ້າຍຂອງເຮົາ ເພາະວ່າໂລກທັງໝົດຈະຖືກເຜົາຜານໃນໄຟແຫ່ງ
ຄວາມຫວງແຫນຂອງເຮົາ [9]ໃນຄາວນັ້ນ ເຮົາຈະປ່ຽນລີ້ນຂອງຊົນຊາດທັງຫລາຍໃຫ້ເປັນລີ້ນບໍ-
ລິສຸດ ເພື່ອວ່າທຸກຄົນຈະຮ້ອງອອກພຣະນາມພຣະຜູ້ເປັນເຈົ້າ ແລະບົວລະບັດພຣະອົງດ້ວຍ
ຈິດໃຈອັນດຽວກັນ [10]ພວກທີ່ຮ້ອງຫາເຮົາ ຄືລູກສາວຂອງຜູ້ທີ່ຖືກກະຈັດກະຈາຍໄປ ຈະນຳເອົາ
ເຄື່ອງບູຊາມາຖວາຍໃຫ້ເຮົາຈາກແມ່ນ້ຳແຫ່ງເອທິໂອເປຍຟາກນັ້ນ [11]ໃນວັນນັ້ນ ເຈົ້າຈະບໍ່ຖືກ
ອັບອາຍຍ້ອນການທັງປວງຂອງເຈົ້າທີ່ໄດ້ກະບົດຕໍ່ສູ້ເຮົາ ເພາະໃນເວລານັ້ນ ເຮົາຈະຖອນຄົນ
ທັງຫລາຍທີ່ຊົມຊື່ນຍິນດີໃນຄວາມຈອງຫອງອອກໄປໃນທ່າມກາງພວກເຈົ້າ ແລະພວກເຈົ້າຈະບໍ່
ມີໃຈໂອ້ອວດຕໍ່ໄປອີກໃນພູເຂົາບໍລິສຸດຂອງເຮົາ. [12]ໃນທ່າມກາງພວກເຈົ້າ ເຮົາຈະເຮັດໃຫ້ມີຈຳ-
ພວກຄົນທຸກຍາກທີ່ຖ່ອມໃຈເຫຼືອຢູ່. [13]ບັນດາຄົນທີ່ເຫລືອຢູ່ຈາກພວກອິສຣາເອນ ພວກເຂົາຈະ
ບໍ່ເຮັດການຊົ່ວຊ້າ ບໍ່ກ່າວຄຳຂີ້ຕົວະ ແລະໃນປາກຂອງພວກເຂົານັ້ນຈະຫາລີ້ນທີ່ຫລອກລວງກໍບໍ່
ມີ ເພາະພວກເຂົາຈະຫຍ່າງໄປຊອກຫາກິນ ແລະພັກຜ່ອນ ນອນລົງ ຈະບໍ່ມີຜູ້ໃດເຮັດໃຫ້ພວກ
ເຂົາຢ້ານກົວ

## ອິສຣາເອນໃນສະໄໝລາຊະອານາຈັກຂອງພຣະເມຊີຢາ

[14]ໂອ ລູກສາວແຫ່ງຊີໂອນເອີຍ ຈົ່ງຮ້ອງເພງດ້ວຍສຽງອັນດັງ ໂອ ອິສຣາເອນເອີຍ ຈົ່ງໂຫ່
ຮ້ອງເຖີດ ໂອ ລູກສາວແຫ່ງເຢຣູຊາເລັມ ຈົ່ງຊົມຊື່ນຍິນດີດ້ວຍສຸດໃຈຂອງເຈົ້າເຖີດ [15]ພຣະຜູ້-
ເປັນເຈົ້າຍົກເລີກການພິພາກສາລົງໂທດເຈົ້າແລ້ວ ພຣະອົງຂັບໄລ່ສັດຕູຂອງເຈົ້າອອກໄປແລ້ວ
ພຣະມະຫາກະສັດແຫ່ງອິສຣາເອນຄືພຣະຜູ້ເປັນເຈົ້າ ຊຶ່ງສະຖິດຢູ່ທ່າມກາງເຈົ້າ ເຈົ້າຈະບໍ່ເຫັນ
ການອັນຕະລາຍອີກຕໍ່ໄປ [16]ໃນວັນນັ້ນ ພວກເຂົາຈະເວົ້າກັບເຢຣູຊາເລັມວ່າ 'ຢ່າຢ້ານເລີຍ'
ແລະເວົ້າກັບຊີໂອນວ່າ 'ຢ່າໃຫ້ມືຂອງເຈົ້າອ່ອນເພຍໄປ' [17]ພຣະຜູ້ເປັນເຈົ້າພຣະເຈົ້າຂອງເຈົ້າ
ທີ່ຢູ່ທ່າມກາງພວກເຈົ້າກໍມີລິດເດດອຳນາດ ພຣະອົງຈະຊ່ວຍໃຫ້ລອດພົ້ນ ພຣະອົງຈະຊົມຊື່ນ
ຍິນດີຍ້ອນເຈົ້າ, ພຣະອົງຈະສຸກກະເສີນໃນຄວາມຮັກຂອງພຣະອົງ, ພຣະອົງຈະຊົມຊື່ນຍິນດີ
ຢ່າງລົ້ນເຫຼືອດ້ວຍບົດເພງແຫ່ງໄຊຊະນະຍ້ອນພວກເຈົ້າ" [18]ເຮົາຈະຮວບຮວມຄົນທີ່ເສົ້າໂສກໃຈ
ຍ້ອນການຊຸມນຸມອັນສັກສິດ, ພວກເຂົາໄດ້ຢູ່ໃນພວກເຈົ້າ, ພວກເຂົາຈຶ່ງຖືກປະຈານໃຫ້ອັບອາຍ
ຂາຍໜ້າຢ່າງໜັກ [19]ເບິ່ງແມ ໃນຄາວນັ້ນ ເຮົາຈະລົງໂທດຜູ້ທີ່ບີບບັງຄັບເຈົ້າທຸກຄົນ ເຮົາຈະ

ຊ່ວຍຄົນຂາພິການໃຫ້ພົ້ນ ແລະຮວບຮວມຄົນທີ່ຖືກຂັບໄລ່ໜີ ເຮົາຈະເຮັດໃຫ້ພວກເຂົາເປັນທີ່
ສັນລະເສີນ ແລະມີຊື່ສຽງຊ່າລືໄປທຸກໆບ່ອນທີ່ພວກເຂົາໄດ້ມີຄວາມອັບອາຍຢ່າງໜັກນັ້ນ. [20]ໃນ
ຄາວນັ້ນເຮົາຈະນຳພວກເຈົ້າກັບຄືນມາອີກ ຄືໃນຄາວທີ່ເຮົາໄດ້ຮວບຮວມພວກເຈົ້າເຂົ້ານຳກັນ
ເຮົາຈະເຮັດໃຫ້ເຈົ້າມີຊື່ສຽງ ແລະເປັນທີ່ສັນລະເສີນໃນທ່າມກາງບັນດາຊົນຊາດທັງຫລາຍໃນ
ແຜ່ນດິນໂລກ ຄືເມື່ອເຮົາຈະໃຫ້ພວກເຈົ້າກັບສູ່ສະພາບເດີມຕໍ່ໜ້າຕໍ່ຕາ ພວກເຈົ້າ” **ພຣະຜູ້ເປັນ-**
**ເຈົ້າ**ກ່າວດັ່ງນີ້ແຫລະ

* * *

# ຮັກກາຍ

## ບົດທີ 1

1ໃນວັນທີໜຶ່ງ ເດືອນທີຫົກ ປີທີສອງແຫ່ງລາຊະການກະສັດດາຣິອຸດ ພຣະທຳຂອງພຣະຜູ້-
ເປັນເຈົ້າໄດ້ມາໂດຍຮັກກາຍຜູ້ປະກາດພຣະທຳ ເຖິງເຊຣູບາເບນລູກຊາຍເຊອານຕິເອນ ຜູ້
ປົກຄອງເມືອງຢູດາ ແລະເຖິງ ໂຢຊວຍ ລູກຊາຍເຢໂຮຊາດັກ ມະຫາປະໂລຫິດວ່າ,
2ພຣະຜູ້ເປັນເຈົ້າແຫ່ງຈັກກະວານກ່າວດັ່ງນີ້ວ່າ ປະຊາຊົນເຫລົ່ານີ້ກ່າວວ່າ “ເວລານັ້ນຍັງບໍ່
ມາເຖິງ ຄືເວລາທີ່ຈະສ້າງພຣະວິຫານຂອງພຣະຜູ້ເປັນເຈົ້າ” 3ແລ້ວພຣະທຳຂອງພຣະຜູ້ເປັນ-
ເຈົ້າຈຶ່ງມາເຖິງໂດຍທາງຮັກກາຍຜູ້ປະກາດພຣະທຳວ່າ 4“ເຖິງເວລາແລ້ວທີ່ພວກເຈົ້າຈະຢູ່ໃນ
ເຮືອນທີ່ມີໄມ້ປູຂອງພວກເຈົ້າ ເວລາທີ່ພຣະວິຫານນີ້ມ້າງເພພັງແລ້ວ ແມ່ນຫລືບໍ່”? 5ບັດນີ້
ພຣະຜູ້ເປັນເຈົ້າແຫ່ງຈັກກະວານຈຶ່ງກ່າວວ່າ “ຈົ່ງເອົາໃຈໃສ່ພິຈາລະນາເບິ່ງວ່າເຈົ້າມີຄວາມເປັນ
ຢູ່ຢ່າງ ໃດ? 6ເຈົ້າຫວ່ານຫລາຍ ແຕ່ເກັບກ່ຽວໜ້ອຍ ເຈົ້າຮັບປະທານແຕ່ບໍ່ເຄີຍອີ່ມ, ເຈົ້າດື່ມແຕ່
ກໍບໍ່ເຄີຍເຊົາຢາກ ເຈົ້ານຸ່ງຫົ່ມແຕ່ກໍບໍ່ມີຜູ້ໃດອົບອຸ່ນ, ຜູ້ທີ່ໄດ້ຄ່າຈ້າງ ກໍໄດ້ຄ່າຈ້າງມາໃສ່ຖົງທີ່
ຮົ່ວ.

7ພຣະຜູ້ເປັນເຈົ້າແຫ່ງຈັກກະວານກ່າວດັ່ງນີ້ວ່າ “ຈົ່ງເອົາໃຈໃສ່ພິຈາລະນາເບິ່ງວ່າ ເຈົ້າມີ
ຄວາມເປັນຢູ່ຢ່າງໃດ? 8ຈົ່ງຂຶ້ນໄປເທິງໂນນພູ ແລະເອົາໄມ້ມາກໍ່ສ້າງພຣະວິຫານແລະເຮົາຈະມີ
ຄວາມພໍໃຈດ້ວຍການນັ້ນ ແລະ ເຮົາຈະໄດ້ຮັບກຽດ; ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນັ້ນ 9ເຈົ້າ
ທັງຫລາຍຫວັງໄດ້ຫລາຍ ແຕ່ເບິ່ງແມ ໄດ້ແຕ່ໜ້ອຍດຽວ ແລະເມື່ອເຈົ້າໄດ້ເອົາມາໃນເຮືອນຂອງ
ເຈົ້າ ເຮົາກໍເປົ່າມັນໄປ” ພຣະຜູ້ເປັນເຈົ້າແຫ່ງຈັກກະວານຊົງກ່າວວ່າ ເປັນຫຍັງຈຶ່ງເປັນຢ່າງ
ນັ້ນ? ກໍເພາະວິຫານຂອງເຮົາຖືກເພພັງຢູ່ແຕ່ຝ່າຍພວກເຈົ້າຕ່າງກໍວິ່ນຢູ່ກັບເລື່ອງເຮືອນຂອງຕົນ
10ເພາະເຫດນີ້ ທ້ອງຟ້າທີ່ຢູ່ເໜືອເຈົ້າຈຶ່ງຫ້າມນ້ຳໝອກໄວ້ແລະດິນກໍຢຶດພືດຜົນຂອງມັນໄວ້
11ເຮົາໄດ້ເອີ້ນຄວາມແຫ້ງແລ້ງມາສູ່ແຜ່ນດິນ ແລະສູ່ໂນນພູ, ສູ່ເຂົ້າ, ນ້ຳອະງຸ່ນໃໝ່ ແລະນ້ຳ-
ມັນ, ສູ່ຜົນລະປູກທີ່ມາຈາກດິນ, ສູ່ມະນຸດ ແລະສັດ ແລະຜົນງານທັງໝົດຊຶ່ງເຮັດໄວ້ດ້ວຍມື”

12ແລ້ວເຊຣູບາເບນ ລູກຊາຍເຊອານຕິເອນ ແລະໂຢຊວຍ ລູກຊາຍເຢໂຮຊາດັກມະຫາ
ປະໂລຫິດພ້ອມ ກັບປະຊາຊົນທັງປວງທີ່ເຫລືອຢູ່ກໍໄດ້ເຊື່ອຟັງພຣະສຸລະສຽງຂອງພຣະຜູ້ເປັນ-
ເຈົ້າພຣະເຈົ້າຂອງພວກເຂົາ ແລະຖ້ອຍຄຳຂອງຮັກກາຍຜູ້ປະກາດພຣະທຳ ເພາະວ່າພຣະຜູ້-
ເປັນເຈົ້າ ພຣະເຈົ້າຂອງພວກເຂົາທັງຫລາຍໄດ້ໃຊ້ເພິ່ນມາ ແລະປະຊາຊົນກໍຢຳເກງຕໍ່ພຣະພັກ
ພຣະຜູ້ເປັນເຈົ້າ 13ແລ້ວຮັກກາຍຜູ້ສົ່ງຂ່າວຂອງພຣະຜູ້ເປັນເຈົ້າ ຈຶ່ງກ່າວແກ່ປະຊາຊົນຕາມຄຳ
ສັ່ງຂອງພຣະຜູ້ເປັນເຈົ້າວ່າ “ພຣະຜູ້ເປັນເຈົ້າກ່າວວ່າເຮົາສະຖິດຢູ່ກັບເຈົ້າທັງຫລາຍ” 14ແລະ
ພຣະຜູ້ເປັນເຈົ້າຊົງເລົ້າໂລມຈິດວິນຍານຂອງເຊຣູບາເບນລູກຊາຍເຊອານຕິເອນ ຜູ້ປົກຄອງ
ເມືອງຢູດາໃຫ້ຕື່ນ ແລະຈິດວິນຍານຂອງໂຢຊວຍລູກຊາຍເຢໂຮຊາດັກມະຫາປະໂລຫິດ ແລະ
ຈິດວິນຍານຂອງປະຊາຊົນທັງປວງທີ່ເຫລືອຢູ່ນັ້ນໃຫ້ຕື່ນ ພວກເຂົາກໍມາ ແລະເຮັດວຽກໃນພຣະ-

ວິຫານຂອງ ພຣະຜູ້ເປັນເຈົ້າ ແຫ່ງຈັກກະວານ ຄື ພຣະເຈົ້າ ຂອງພວກເຂົາ 15ໃນວັນທີຊາວສີ່
ເດືອນທີຫົກ ໃນປີທີສອງ ແຫ່ງລາຊະການກະສັດ ດາຣິອຸດ

# ບົດທີ 2

## ພຣະສັນຍາຂອງພຣະເຈົ້າກ່ຽວກັບພຣະວິຫານຫລັງໃໝ່

1ໃນວັນທີຊາວເອັດ ເດືອນທີເຈັດພຣະທຳຂອງ ພຣະຜູ້ເປັນເຈົ້າ ມາໂດຍທາງ ຮັກກາຍ ຜູ້ປະ-
ກາດພຣະທຳວ່າ 2"ຈົ່ງກ່າວແກ່ ເຊຣູບາເບນ ລູກຊາຍ ເຊອານຕີເອນ ຜູ້ປົກຄອງເມືອງ ຢູດາ ແລະ
ແກ່ ໂຢຊວຍ ລູກຊາຍ ເຢໂຮຊາດັກ ມະຫາປະໂລຫິດ ແລະກ່າວແກ່ປະຊາຊົນທີ່ເຫລືອຢູ່ ວ່າ 3ໃຜ
ແດ່ທີ່ ເຫລືອຢູ່ໃນທ່າມກາງພວກທ່ານທີ່ໄດ້ ເຫັນພຣະວິຫານນີ້ໃນສະຫງ່າລາສີ ເດີມນັ້ນ? ແລະ
ດຽວນີ້ພວກ ທ່ານເຫັນວິຫານນີ້ເປັນຢ່າງໃດ? ເບິ່ງແລ້ວປຽບກັນບໍ່ໄດ້ເລີຍແມ່ນບໍ? 4ພຣະຜູ້-
ເປັນເຈົ້າ ກ່າວວ່າ "ແຕ່ວ່າດຽວນີ້ ເຊຣູບາເບນ ເອີຍຈົ່ງເຂັ້ມແຂງເທີ້ນ, ໂອ ໂຢຊວຍ ລູກຊາຍ ເຢ-
ໂຮຊາດັກ ມະຫາປະໂລຫິດ ເອີຍ ຈົ່ງເຂັ້ມແຂງເທີ້ນ, ປະຊາຊົນທັງໝົດ ແຫ່ງ ແຜ່ນດິນ ເອີຍ ຈົ່ງ
ເຂັ້ມແຂງເທີ້ນ" ພຣະຜູ້ເປັນເຈົ້າ ແຫ່ງຈັກກະວານກ່າວວ່າ "ຈົ່ງເຮັດວຽກສາ ເພາະເຮົາສະຖິດຢູ່
ກັບພວກເຈົ້າ ພຣະຜູ້ເປັນເຈົ້າ ຊົງກ່າວດັ່ງນີ້ແຫລະ 5"ຄຳສັນຍາທີ່ເຮົາເຮັດໄວ້ກັບພວກເຈົ້າ ເມື່ອ
ເຈົ້າທັງຫລາຍອອກຈາກ ເອຢິບ ແລະວິນຍານຂອງເຮົາກໍສະຖິດຢູ່ທ່າມກາງພວກເຈົ້າ ຢ່າຊູ່ຢ້ານ
ເລີຍ" 6ພຣະຜູ້ເປັນເຈົ້າ ແຫ່ງ ຈັກກະວານກ່າວດັ່ງນີ້ວ່າ "ອີກເທື່ອໜຶ່ງ ໃນບໍ່ຊ້ານີ້ເຮົາຈະສັ່ນ
ທ້ອງຟ້າ ແລະແຜ່ນດິນໂລກ ນ້ຳທະເລ ແລະແຜ່ນດິນແຫ້ງໃຫ້ຫວັ່ນໄຫວ ແລະເຮົາຈະເຮັດໃຫ້
ປະຊາຊາດທັງປວງຫວັ່ນໄຫວ. 7ຜູ້ນັ້ນທີ່ພວກຕ່າງດ້າວທັງປວງປາດຖະໜາກໍຈະມາ ແລະເຮົາ
ຈະ ເຮັດໃຫ້ວິຫານນີ້ເຕັມໄປດ້ວຍສະຫງ່າລາສີ" ພຣະຜູ້ເປັນເຈົ້າ ແຫ່ງ ຈັກກະວານຊົງກ່າວດັ່ງນີ້
ແຫລະ 8"ເງິນເປັນຂອງເຮົາ ແລະຄຳເປັນຂອງເຮົາ ສະຫງ່າລາສີຂອງພຣະວິຫານຫລັງນີ້ຈະ
ໃຫຍ່ກວ່າສະງ່າລາສີເດີມ ນັ້ນ" ພຣະຜູ້ເປັນເຈົ້າ ແຫ່ງຈັກກະວານຊົງກ່າວດັ່ງນີ້ແຫລະ 9ພຣະ-
ຜູ້ເປັນເຈົ້າ ແຫ່ງ ຈັກກະວານກ່າວວ່າ "ແລະ ເຮົາຈະປະທານຄວາມສົມບູນພູນສຸກໃນສະຖານທີ່
ແຫ່ງນີ້"

## ຊົງຕິຕຽນປະຊາຊົນເພາະພວກເຂົາລະເລີຍໃນການຕຽມພຣະວິຫານ

10ໃນວັນທີຊາວສີ່ ເດືອນທີເກົ້າ ໃນປີທີສອງຂອງລາຊະການ ດາຣິອຸດ ພຣະທຳຂອງ ພຣະຜູ້-
ເປັນເຈົ້າ ມາເຖິງ ຮັກກາຍ ຜູ້ປະກາດພຣະທຳວ່າ 11"ພຣະຜູ້ເປັນເຈົ້າ ແຫ່ງ ຈັກກະວານກ່າວດັ່ງນີ້
ວ່າ "ຈົ່ງສືບຖາມບັນດາປະໂລຫິດກ່ຽວກັບພຣະບັນຍັດວ່າ 12"ຖ້າຜູ້ໃດເອົາສາຍເສື້ອຄຸມເຮັດຜ້າຫໍ່
ຕ່ອນຊີ້ນບໍລິສຸດໄປ ຫາກວ່າເສື້ອໂຕນັ້ນໄປຖືກເຂົ້າຈີ່ຫລືແກງ ຫລືນ້ຳອະງຸ່ນ ຫລືນ້ຳມັນ ຫລື
ອາຫານສິ່ງໃດສິ່ງໜຶ່ງ ສິ່ງນັ້ນຈະບໍລິສຸດໄປນຳຫລືບໍ່?" ພວກປະໂລຫິດຕອບວ່າ "ບໍ່" 13ແລ້ວ
ຮັກກາຍ ໄດ້ຖາມວ່າ "ຖ້າຄົນໜຶ່ງຄົນໃດທີ່ເປັນມົນທິນເພາະໄປຖືກສົບມາ ແລ້ວມາຖືກສິ່ງເຫລົ່າ
ນີ້ ແລະສິ່ງເຫລົ່ານີ້ຈະເປັນມົນທິນໄປນຳຫລືບໍ່?" ປະໂລຫິດຕອບວ່າ "ສິ່ງເຫລົ່ານີ້ກໍເປັນມົນທິນ
ໄປນຳ"

14ຮັກກາຍ ຈຶ່ງຕອບວ່າ "ພຣະຜູ້ເປັນເຈົ້າກ່າວວ່າ ຕໍ່ພຣະພັກຂອງເຮົາ ຊົນຊາດນີ້ເປັນຢ່າງ

ນັ້ນ ແລະປະຊາຊາດນີ້ ກໍເປັນຢ່າງນັ້ນ ຜົນງານທຸກຢ່າງທີ່ມືຂອງພວກເຂົາເຮັດກໍເປັນຢ່າງນັ້ນ
ດ້ວຍ ແລະສິ່ງຂອງທີ່ພວກເຂົາຖວາຍບູຊາບ່ອນນັ້ນ ກໍເປັນມົນທິນ [15]ບັດນີ້ ຈົ່ງເອົາໃຈໃສ່ພິຈາ-
ລະນາເບິ່ງວ່າ ຕັ້ງແຕ່ນີ້ຕໍ່ໄປຈະເກີດຫຍັງຂຶ້ນ ຄືກ່ອນທີ່ສີລາກ້ອນໜຶ່ງຈະວາງຊ້ອນເທິງສີລາອີກ
ກ້ອນໜຶ່ງໃນພຣະວິຫານຂອງ ພຣະຜູ້ເປັນເຈົ້າ [16]ກ່ອນສິ່ງເຫລົ່ານີ້ຈະເກີດຂຶ້ນ ເມື່ອຜູ້ໃດມາຍັງ
ກອງເຂົ້າຄິດວ່າຈະຕວງໄດ້ຊາວໝື່ນກໍມີແຕ່ສິບໝື່ນ ເມື່ອຜູ້ໜຶ່ງມາເຖິງບໍ່ເກັບນ້ຳອະງຸ່ນ ເພື່ອຕັກ
ເອົາຫ້າສິບຖັງກໍມີແຕ່ຊາວຖັງ [17]ພຣະຜູ້ເປັນເຈົ້າກ່າວວ່າ “ເຮົາໄດ້ໂຈມຕີພວກເຈົ້າດ້ວຍໄຟໄໝ້,
ດ້ວຍຂີ້ໝ້ຽງ ແລະດ້ວຍໝາກເຫັບ ໃນການງານທັງປວງຈາກມືຂອງພວກເຈົ້າ, ແຕ່ໃນພວກເຈົ້າ
ບໍ່ມີຜູ້ໃດຫັນກັບມາຫາເຮົາ [18]ເບິ່ງແມ ຈົ່ງເອົາໃຈໃສ່ພິຈາລະນາເບິ່ງຕັ້ງແຕ່ວັນນີ້ເປັນຕົ້ນໄປຄືວັນ
ທີຊາວສີ່ ເດືອນທີເກົ້າຕັ້ງແຕ່ມື້ທີ່ວາງ ຮາກຖານແຫ່ງພຣະວິຫານຂອງ ພຣະຜູ້ເປັນເຈົ້າລົງ ຈົ່ງ
ເອົາໃຈໃສ່ພິຈາລະນາເບິ່ງສາ [19]ຍັງມີແນວປູກຕົກຄ້າງຢູ່ໃນເລົ້າຫລືບໍ່? ຮອດທັງເຄືອອະງຸ່ນ,
ຕົ້ນໝາກເດື່ອເທດ ແລະຕົ້ນພິລາພ້ອມກັບຕົ້ນ ໝາກກອກເທດ ຍັງບໍ່ເກີດໝາກອີກບໍ? ຕັ້ງແຕ່
ວັນນີ້ເປັນຕົ້ນໄປເຮົາຈະອວຍພອນແກ່ເຈົ້າ”

## ພຣະສັນຍາຂອງພຣະເຈົ້າທີ່ມີຕໍ່ເຊຣູບາເບນ

[20]ພຣະທຳຂອງ ພຣະຜູ້ເປັນເຈົ້າ ມາເຖິງ ຮັກກາຍ ເປັນເທື່ອທີສອງ ໃນວັນທີຊາວສີ່ຂອງເດືອນ
ນັ້ນວ່າ [21]“ຈົ່ງເວົ້າກັບ ເຊຣູບາເບນ ຜູ້ປົກຄອງເມືອງຢູດາວ່າ ເຮົາຈະສັ່ນທ້ອງຟ້າ ແລະແຜ່ນດິນ
ໂລກໃຫ້ຫວັ່ນໄຫວ [22]ແລະເຮົາຈະຂວ້ຳພະທີ່ນັ່ງຂອງບັນດາລາຊະອານາຈັກ ເຮົາຈະທຳລາຍ
ອຳນາດແຫ່ງບັນດາລາຊະອານາຈັກຂອງພວກຕ່າງຊາດ ແລະເຮົາຈະຂວ້ຳລົດຮົບພ້ອມກັບຜູ້ຂັບ
ຂີ່ລົດນັ້ນ ແລະບັນດາມ້າກັບຜູ້ຂີ່ມ້ານັ້ນຈະຕ້ອງລົ້ມລົງ ຄືທຸກຄົນຈະຕ້ອງລົ້ມລົງດ້ວຍດາບຂອງ
ພີ່ນ້ອງຂອງຕົນ [23]ພຣະຜູ້ເປັນເຈົ້າ ແຫ່ງຈັກກະວານກ່າວວ່າ “ໃນວັນນັ້ນເຮົາຈະຮັບ ເຊຣູບາເບນ
ລູກຊາຍ ເຊອານຕິເອນ ຜູ້ຮັບໃຊ້ຂອງເຮົາ” ພຣະຜູ້ເປັນເຈົ້າກ່າວວ່າ “ເຮົາຈະເຮັດເຈົ້າໃຫ້ເປັນຄື
ແຫວນປະທັບຕາ ເພາະເຮົາໄດ້ເລືອກສັນເຈົ້າແລ້ວ ພຣະຜູ້ເປັນເຈົ້າ ແຫ່ງຈັກກະວານກ່າວດັ່ງນີ້
ແຫລະ”

* * *

# ເຊຄາຣິຢາ

## ບົດທີ 1

### ຜູ້ປະກາດພຣະທຳເຊຄາຣິຢາຕັກເຕືອນປະຊົນຊົນ

1ໃນເດືອນທີແປດ ປີທີສອງແຫ່ງລາຊະການດາຣິອຸດ ພຣະທຳຂອງພຣະຜູ້ເປັນເຈົ້າມາເຖິງ
ເຊຄາຣິຢາ ລູກຊາຍຂອງເບເຣກີຢາ ຜູ້ຊຶ່ງເປັນລູກຊາຍຂອງ ຜູ້ປະກາດພຣະທຳ ອິດໂດ ວ່າ
2“ພຣະຜູ້ເປັນເຈົ້າໂກດຮ້າຍຕໍ່ບັນພະບູລຸດຂອງພວກເຈົ້າຈົ່ງບອກພວກເຂົາວ່າ 3ພຣະຜູ້ເປັນເຈົ້າ
ແຫ່ງຈັກກະວານກ່າວວ່າ ຈົ່ງກັບມາຫາເຮົາ ພຣະຜູ້ເປັນເຈົ້າແຫ່ງຈັກກະວານກ່າວ ແລະເຮົາຈະ
ກັບມາຫາພວກເຈົ້າ ພຣະຜູ້ເປັນເຈົ້າແຫ່ງຈັກກະວານກ່າວດັ່ງນີ້ແຫລະ 4ຢ່າເປັນເໝືອນກັບບັນ-
ພະບູລຸດຂອງພວກເຈົ້າ ຊຶ່ງບັນດາຜູ້ປະກາດພຣະທຳຄົນກ່ອນໆ ຮ້ອງບອກພວກເຂົາວ່າ ‘ພຣະ-
ຜູ້ເປັນເຈົ້າແຫ່ງຈັກກະວານກ່າວດັ່ງນີ້ວ່າ ຈົ່ງຖອຍຫລັງກັບຈາກທາງຊົ່ວຮ້າຍ ແລະຈາກການ
ເຮັດທີ່ຊົ່ວຊ້າຂອງເຈົ້າສາ’ ແຕ່ພວກເຂົາບໍ່ໄດ້ຍິນ ແລະບໍ່ໄດ້ເອົາໃຈໃສ່ຟັງເຮົາ 5ບັນພະບູລຸດ
ຂອງພວກທ່ານຢູ່ບ່ອນໃດ? ພວກຜູ້ປະກາດພຣະທຳ ກໍຈະມີຊີວິດຢູ່ຕະຫລອດໄປບໍ? 6ແຕ່ຖ້ອຍ
ຄຳ ແລະຂໍ້ບັນຍັດທັງຫລາຍຂອງເຮົາທີ່ເຮົາໄດ້ສັ່ງແກ່ພວກຜູ້ປະກາດພຣະທຳ ຜູ້ຮັບໃຊ້ຂອງເຮົາ
ກໍໄດ້ຕິດຕາມບັນພະບູລຸດຂອງພວກເຈົ້າບໍ່ແມ່ນບໍ” ຈົນພວກເຂົາກັບໃຈແລ້ວກ່າວວ່າ “ພຣະຜູ້-
ເປັນເຈົ້າແຫ່ງຈັກກະວານໄດ້ຕັ້ງໃຈວ່າຈະກະທຳແກ່ພວກເຮົາຢ່າງໃດ ໃນເລື່ອງຮີດຄອງ ແລະ
ການກະທຳຂອງພວກເຮົາ ພຣະອົງກໍໄດ້ກະທຳຢ່າງນັ້ນແກ່ພວກເຮົາ”

### ທູດສະຫວັນຂອງພຣະເຈົ້າຂີ່ມ້າສີແດງ

7ໃນວັນທີຊາວສີ່ ເດືອນທີສິບເອັດ ຊຶ່ງເປັນເດືອນເຊບັດ ໃນປີທີສອງຂອງກະສັດດາຣິອຸດ
ພຣະທຳຂອງພຣະຜູ້ເປັນເຈົ້າໄດ້ມາເຖິງຜູ້ປະກາດພຣະທຳເຊຄາຣິຢາ ລູກຊາຍຂອງເບເຣກີຢາ
ຜູ້ເປັນລູກຊາຍຂອງອິດໂດ ຜູ້ປະກາດພຣະທຳວ່າ

8“ໃນກາງຄືນມື້ໜຶ່ງ ຂ້າພະເຈົ້າໄດ້ເຫັນ ແລະເປັນດັ່ງນີ້ ມີຊາຍຄົນໜຶ່ງຂີ່ມ້າສີແດງ ຢືນຢູ່
ທ່າມກາງຕົ້ນນໍ້າມັນຊຽວທີ່ພູເຂົາ ຢູ່ເບື້ອງຫລັງທ່ານຜູ້ນັ້ນມີມ້າສີແດງ ສີດ່າງ ແລະສີຂາວ
9ແລ້ວຂ້າພະເຈົ້າຈຶ່ງຖາມວ່າ ‘ນາຍເຈົ້າເອີຍສິ່ງເຫລົ່ານີ້ຄືຫຍັງ’ ແລະຜູ້ຢືນຢູ່ທ່າມກາງຕົ້ນນໍ້າມັນ
ຊຽວໄດ້ຕອບໂດຍກ່າວວ່າ ‘ເຮົາຈະສະແດງໃຫ້ເຈົ້າຮູ້ວ່າ ສິ່ງເຫລົ່ານີ້ຄືຫຍັງ’ 10ແລະຊາຍທີ່ຢືນຢູ່
ທ່າມກາງຕົ້ນນໍ້າມັນຊຽວຈຶ່ງບອກວ່າ ‘ເຫລົ່ານີ້ຄືຜູ້ທີ່ພຣະຜູ້ເປັນເຈົ້າໄດ້ໃຊ້ໃຫ້ໄປທົ່ວແຜ່ນດິນ
ໂລກ’ 11ແລະເຂົາເຫລົ່ານັ້ນໄດ້ລາຍງານທູດສະຫວັນຂອງພຣະຜູ້ເປັນເຈົ້າ ຜູ້ຢືນຢູ່ທ່າມກາງຕົ້ນ
ນໍ້າມັນຊຽວວ່າ ‘ພວກເຮົາໄດ້ທ່ຽວໄປມາເທິງແຜ່ນດິນໂລກ ແລະເບິ່ງແມ ໂລກກໍຍັງມີຄວາມສຸກ
ກະເສີມສະຫງົບສຸກຢູ່’

### ພຣະເຈົ້າເມດຕາເມືອງເຢຣູຊາເລັມຫລັງຈາກການເປັນຊະເລີຍເຈັດສິບປີແລ້ວ

12ແລ້ວທູດສະຫວັນຂອງພຣະຜູ້ເປັນເຈົ້າໄດ້ຖາມວ່າ ‘ຂ້າແດ່ພຣະຜູ້ເປັນເຈົ້າແຫ່ງຈັກກະ-
ວານ ອີກດົນປານໃດບໍ ທີ່ພຣະອົງຈະບໍ່ເມດຕາເມືອງເຢຣູຊາເລັມ ແລະຫົວເມືອງແຫ່ງຢູດາ

ຊຶ່ງພຣະອົງໄດ້ຄຽດຮ້າຍມາເຈັດສິບປີແລ້ວນັ້ນ’ [13]ແລະ ພຣະຜູ້ເປັນເຈົ້າ ຕອບທູດສະຫວັນຜູ້ທີ່
ສົນທະນາກັບຂ້າພະເຈົ້າ ດ້ວຍຖ້ອຍຄຳທີ່ປະເສີດ ແລະເລົ້າໂລມໃຈ [14]ທູດສະຫວັນຜູ້ທີ່ສົນທະ-
ນາຢູ່ກັບຂ້າພະເຈົ້າຈຶ່ງບອກແກ່ຂ້າພະເຈົ້າວ່າ ‘ຈົ່ງຮ້ອງວ່າ ພຣະຜູ້ເປັນເຈົ້າ ແຫ່ງຈັກກະວານ
ກ່າວດັ່ງນີ້ວ່າ ເຮົາມີຄວາມຫວງແຫນອັນໃຫຍ່ຫລວງຕໍ່ເມືອງ ເຢຣູຊາເລັມ ແລະເມືອງຊີໂອນ
[15]ເຮົາໄດ້ຄຽດຮ້າຍດ້ວຍຄວາມຄຽດທີ່ລຸກໄໝ້ຂຶ້ນສູງຕໍ່ສູ້ພວກຕ່າງຊາດທີ່ຢູ່ສຸກສະບາຍ ເມື່ອເຮົາ
ຮ້າຍໜ້ອຍໜຶ່ງພວກຕ່າງຊາດໄດ້ກໍ່ໄພພິບັດຢ່າງຮ້າຍແຮງ [16]ເພາະສະນັ້ນ ພຣະຜູ້ເປັນເຈົ້າ ຈຶ່ງ
ກ່າວດັ່ງນີ້ວ່າ ເຮົາໄດ້ກັບມາເມືອງ ເຢຣູຊາເລັມ ດ້ວຍຄວາມເມດຕາ ພວກເຂົາຈະສ້າງພຣະວິ-
ຫານຂອງເຮົາອີກໃນບ່ອນນັ້ນ ແລະຊຶ່ງເຊືອກວັດແທກເມືອງ ເຢຣູຊາເລັມ [17]ຈົ່ງປະກາດອີກວ່າ
ພຣະຜູ້ເປັນເຈົ້າ ແຫ່ງຈັກກະວານກ່າວດັ່ງນີ້ວ່າ ເມືອງທັງຫລາຍຂອງເຮົາຈະມີຊັບສົມບັດຢ່າງລົ້ນ
ເຫລືອ ແລະ ພຣະຜູ້ເປັນເຈົ້າ ຈະຊ່ວຍຊູຊີໂອນ ແລະຍັງຈະເລືອກເມືອງ ເຢຣູຊາເລັມ ອີກເທື່ອ
ໜຶ່ງ’”

## ນິມິດເລື່ອງເຂົາສີ່ເຂົາກັບຊ່າງໄມ້ສີ່ຄົນ

[18]ຂ້າພະເຈົ້າໄດ້ເງີຍໜ້າຂຶ້ນ ແລະໄດ້ເຫັນ ເບິ່ງແມ ມີເຂົາແຫລມສີ່ເຂົາ [19]ຂ້າພະເຈົ້າໄດ້ຖາມ
ທູດສະຫວັນທີ່ສົນທະນາຢູ່ກັບຂ້າພະເຈົ້າວ່າ “ເຂົາເຫລົ່ານີ້ໝາຍເຖິງຫຍັງ?” ເພິ່ນໄດ້ຕອບຂ້າ-
ພະເຈົ້າວ່າ “ເຂົາເຫລົ່ານີ້ໝາຍເຖິງເຂົາທີ່ເຮັດໃຫ້ຢູດາ ອິສຣາເອນ ແລະ ເຢຣູຊາເລັມ ພັດພາກ
ຈາກກັນ” [20]ແລ້ວ ພຣະຜູ້ເປັນເຈົ້າ ຈຶ່ງໄດ້ໃຫ້ຂ້າພະເຈົ້າເຫັນຊ່າງໄມ້ສີ່ຄົນ ແລະຂ້າພະເຈົ້າຈຶ່ງ
ຖາມວ່າ “ຄົນເຫລົ່ານີ້ມາເຮັດຫຍັງ? [21]ທູດສະຫວັນໄດ້ຕອບວ່າ “ອັນນີ້ແມ່ນເຂົາແຫລມທີ່ເຮັດ
ໃຫ້ຢູດາພັດພາກຈາກກັນໄປ ຈົນບໍ່ມີຜູ້ໃດຍົກຫົວຂຶ້ນໄດ້ອີກ ແລະຊ່າງເຫລົ່ານີ້ໄດ້ມາເຮັດໃຫ້
ເຂົາແຫລມນັ້ນຢ້ານ ຈຶ່ງຕັດເຂົາແຫລມຂອງພວກຕ່າງຊາດ ທີ່ໄດ້ຍົກເຂົາແຫລມຕໍ່ສູ້ແຜ່ນດິນຢູ-
ດາອັນເຮັດໃຫ້ພັດພາກຈາກກັນໄປ”

# ບົດທີ 2

## ການວັດແທກເມືອງເຢຣູຊາເລັມໃນອະນາຄົດ

[1]ຂ້າພະເຈົ້າໄດ້ເງີຍໜ້າຂຶ້ນອີກ ແລະໄດ້ເຫັນ ເບິ່ງແມ ມີຊາຍຄົນໜຶ່ງຊຶ່ງໃນມືຂອງຜູ້ນີ້ມີ
ເຊືອກວັດແທກ [2]ຂ້າພະເຈົ້າຈຶ່ງຖາມວ່າ “ທ່ານຈະໄປໃສ” ເພິ່ນໄດ້ບອກຂ້າພະເຈົ້າວ່າ “ຈະໄປ
ວັດແທກເມືອງ ເຢຣູຊາເລັມ ເບິ່ງວ່າ ກວ້າງເທົ່າໃດ ຍາວເທົ່າໃດ” [3]ແລະທູດສະຫວັນໄດ້ສົນທະ-
ນາກັບຂ້າພະເຈົ້າແລ້ວກໍອອກໄປ ທູດສະຫວັນອີກອົງໜຶ່ງກໍອອກໄປພົບກັບເພິ່ນ

## ໃນຍຸກອານາຈັກ 1, 000 ປີ ເຢຣູຊາເລັມຈະໄດ້ຮັບພຣະພອນ

[4]ແລະບອກເພິ່ນວ່າ “ຈົ່ງແລ່ນໄປ ເວົ້າກັບຄົນໜຸ່ມຄົນນັ້ນວ່າ ‘ຈະມີຄົນມາອາໄສຢູ່ໃນ ເຢຣູ-
ຊາເລັມ ແລະເມືອງທີ່ບໍ່ມີກຳແພງອ້ອມ ເພາະວ່າປະຊາຊົນ ແລະສັດລ້ຽງໃນບ່ອນນັ້ນຈະມີຢ່າງ
ຫລວງຫລາຍ [5]ພຣະຜູ້ເປັນເຈົ້າກ່າວວ່າ ຝ່າຍເຮົາ, ເຮົາຈະເປັນກຳແພງແປວໄຟອ້ອມເມືອງນັ້ນ
ແລະເຮົາຈະເປັນສະຫງ່າລາສີໃນກາງເມືອງນັ້ນ

[6]ພຣະຜູ້ເປັນເຈົ້າກ່າວວ່າ ເຮີຍ ເຮີຍ ຈົ່ງໜີໄປໃຫ້ພົ້ນຈາກແຜ່ນດິນທິດເໜືອ ເພາະວ່າເຮົາ

ໄດ້ໃຫ້ພວກເຈົ້າພັດພາກຈາກກັນໄປ ເໝືອນດັ່ງລົມທັງສີ່ທິດຂອງທ້ອງຟ້າ ພຣະຜູ້ເປັນເຈົ້າ ກ່າວ
ດັ່ງນັ້ນ [7]ໂອ ຊີໂອນ ເອີຍ ເຈົ້າຜູ້ທີ່ອາໄສຢູ່ກັບລູກສາວຂອງ ບາບີໂລນ ຈົ່ງປົບໜີໄປສາ [8]ພຣະ-
ຜູ້ເປັນເຈົ້າ ແຫ່ງຈັກກະວານ ຈຶ່ງກ່າວດັ່ງນີ້ວ່າພາຍຫລັງສະຫງ່າລາສີ ພຣະອົງໄດ້ໃຊ້ເຮົາໃຫ້ໄປ
ຫາພວກຕ່າງຊາດທີ່ປຸ້ນພວກເຈົ້າ ເພາະວ່າຜູ້ທີ່ໄດ້ແຕະຕ້ອງພວກເຈົ້າ ກໍໄດ້ແຕະຕ້ອງແກ້ວຕາ
ຂອງພຣະອົງ [9]ເບິ່ງແມ ເຮົາຈະສັ່ນມືຂອງເຮົາເທິງພວກຕ່າງຊາດນັ້ນຄືນທັງຫລາຍທີ່ເຄີຍບົວ-
ລະບັດພວກເຂົາແຕ່ກ່ອນກໍຈະປຸ້ນພວກເຂົາ' ແລ້ວພວກເຈົ້າຈະໄດ້ຮູ້ຈັກວ່າພຣະຜູ້ເປັນເຈົ້າ ແຫ່ງ
ຈັກກະວານໃຊ້ຂ້າພະເຈົ້າມາ

[10]ພຣະຜູ້ເປັນເຈົ້າກ່າວວ່າລູກສາວຂອງຊີໂອນ ເອີຍ ຈົ່ງໂຫ່ຮ້ອງ ແລະຊື່ນຊົມຍິນດີເຖີດ ເບິ່ງ
ແມ ເຮົາໄດ້ມາ ແລະເຮົາຈະສະຖິດຢູ່ທ່າມກາງພວກເຈົ້າ [11]ໃນວັນນັ້ນບັນດາປະຊາຊາດເປັນ
ຈຳນວນຫລາຍ ຈະ ເຂົ້າສ່ວນກັບ ພຣະຜູ້ເປັນເຈົ້າ ແລະພວກ ເຂົາຈະ ເປັນປະຊາຊົນ ຂອງ ເຮົາ
ແລະ ເຮົາຈະສະຖິດຢູ່ທ່າມກາງພວກເຈົ້າ ແລະພວກເຈົ້າຈະຮູ້ວ່າ ພຣະຜູ້ເປັນເຈົ້າ ແຫ່ງຈັກກະ-
ວານໄດ້ໃຊ້ເຮົາມາຫາພວກເຈົ້າ [12]ຢູດາ ເປັນສ່ວນມໍລະດົກຂອງ ພຣະຜູ້ເປັນເຈົ້າ ເທິງແຜ່ນດິນບໍ-
ລິສຸດ ແລະພຣະອົງຈະເລືອກເມືອງ ເຢຣູຊາເລັມ ອີກ" [13]ຂໍໃຫ້ບັນດາເນື້ອໜັງຈົ່ງມິດງຽບສະຫງົບ
ຢູ່ຕໍ່ພຣະພັກ ພຣະຜູ້ເປັນເຈົ້າ ເພາະວ່າພຣະອົງຕື່ນຂຶ້ນຈາກບ່ອນສະຖິດຂອງພຣະອົງແລ້ວ

# ບົດທີ 3

## ໂຢຊວຍລວບລວມເຄື່ອງແຕ່ງກາຍແຫ່ງຄວາມຊອບທຳ

[1]ແລ້ວທູດສະຫວັນນັ້ນໄດ້ສະແດງໃຫ້ຂ້າພະເຈົ້າເຫັນ ໂຢຊວຍ ມະຫາປະໂລຫິດ ຊຶ່ງຢືນຢູ່ຕໍ່-
ໜ້າທູດສະຫວັນຂອງ ພຣະຜູ້ເປັນເຈົ້າ ແລະຊາຕານ ຢືນຢູ່ຂ້າງຂວາມືຂອງທ່ານ ຂັດຂວາງທ່ານ
[2]ພຣະຜູ້ເປັນເຈົ້າ ໄດ້ບອກກ່າວຕໍ່ ຊາຕານ ວ່າ "ໂອ ຊາຕານ ພຣະຜູ້ເປັນເຈົ້າ ກ່າວຫ້າມເຈົ້າ
ພຣະຜູ້ເປັນເຈົ້າຜູ້ໄດ້ເລືອກເມືອງ ເຢຣູຊາເລັມ ຊົງຫ້າມເຈົ້າ ທ່ານຜູ້ນີ້ບໍ່ແມ່ນຖ່ານໄຟທີ່ໄດ້ອອກ
ມາຈາກໄຟບໍ່ແມ່ນບໍ" [3]ຝ່າຍ ໂຢຊວຍ ນັ້ນນຸ່ງ ເຄື່ອງ ເປິເປື້ອນຢືນຢູ່ຕໍ່ໜ້າທູດສະຫວັນ [4]ທູດສະ-
ຫວັນໄດ້ຍົກສຽງເວົ້າ ແລະບອກຜູ້ທີ່ຢືນຢູ່ຕໍ່ໜ້າທ່ານວ່າ "ຈົ່ງຖອດ ເຄື່ອງນຸ່ງ ເປື້ອນອອກຈາກ
ທ່ານສາ" ແລະທູດສະຫວັນເວົ້າກັບທ່ານວ່າ "ເບິ່ງແມ ເຮົາໄດ້ເອົາຄວາມຊົ່ວຊ້າອະທຳອອກໄປ
ຈາກເຈົ້າແລ້ວ ແລະເຮົາຈະໃຫ້ເຈົ້ານຸ່ງເຄື່ອງສຳລັບເທດສະການ" [5]ແລະຂ້າພະເຈົ້າວ່າ "ຈົ່ງເອົາ
ຜ້າແພບໍລິສຸດມາຄຽນຫົວຂອງທ່ານ" ແລະພວກເຂົາຈຶ່ງ ເອົາຜ້າແພບໍລິສຸດມາຄຽນຫົວຂອງທ່ານ
ທັງເອົາເຄື່ອງນຸ່ງໃຫ້ທ່ານນຸ່ງໃໝ່ ແລະທູດສະຫວັນຂອງ ພຣະຜູ້ເປັນເຈົ້າກໍຢືນຢູ່ບ່ອນນັ້ນ [6]ທູດ-
ສະຫວັນຂອງ ພຣະຜູ້ເປັນເຈົ້າ ຈຶ່ງກ່າວແກ່ ໂຢຊວຍ ວ່າ [7]"ພຣະຜູ້ເປັນເຈົ້າ ແຫ່ງຈັກກະວານກ່າວ
ດັ່ງນີ້ວ່າ ຖ້າເຈົ້າດຳເນີນໃນບັນດາທາງຂອງເຮົາ ແລະຮັກສາຄຳສັ່ງທີ່ເຮົາຝາກໄວ້ກັບເຈົ້າ ເຈົ້າ
ຈະໄດ້ປົກຄອງວິຫານຂອງເຮົາ ແລະເບິ່ງແຍງລາຊະສຳນັກຂອງເຮົາ ແລະເຮົາຈະໂຜດໃຫ້ເຈົ້າ
ມີສິດເຂົ້າໄປທ່າມກາງພວກເຫລົ່ານີ້ທີ່ເຝົ້າຢູ່ຕໍ່ໜ້າເຮົາ [8]ໂຢຊວຍ ມະຫາປະໂລຫິດ ຈົ່ງຟັງ ເຈົ້າ
ແລະພວກເພື່ອນຂອງເຈົ້າຜູ້ທີ່ນັ່ງຢູ່ຂ້າງໜ້າ ເຈົ້າຈົ່ງຟັງສາ ເພາະຄົນເຫລົ່ານີ້ເປັນຄົນສຳຄັນ
ເບິ່ງແມ ເຮົາຈະນຳຜູ້ຮັບໃຊ້ຂອງເຮົາມາ ຄື ພຣະກິ່ງ [9]ເພາະວ່າ ພຣະຜູ້ເປັນເຈົ້າ ແຫ່ງຈັກກະ-

ວານກ່າວວ່າ ຈົ່ງເບິ່ງຫີນຊຶ່ງເຮົາວາງໄວ້ຕໍ່ໜ້າໂຢຊວຍ ເປັນຫີນກ້ອນດຽວທີ່ມີຕາເຈັດໜ່ວຍ
ເບິ່ງແມ ເຮົາຈະສະຫລັກຮູບເທິງຫີນນັ້ນ ແລະເຮົາຈະຖອດຄວາມຊົ່ວຊ້າອະທຳຂອງແຜ່ນດິນນີ້
ອອກໄປໃນວັນດຽວ [10]ພຣະຜູ້ເປັນເຈົ້າແຫ່ງຈັກກະວານກ່າວວ່າ ໃນວັນນັ້ນພວກເຈົ້າຈະເຊີນ
ເພື່ອນບ້ານຂອງເຈົ້າທຸກຄົນມາຢູ່ກ້ອງເຄືອອະງຸ່ນ ແລະຢູ່ກ້ອງຕົ້ນໝາກເດື່ອເທດ"

# ບົດທີ 4

## ເຄື່ອງຮອງຕີນໂຄມເຮັດດ້ວຍຄຳ ແລະຕົ້ນໝາກກອກເທດສອງຕົ້ນ

[1]ແລ້ວທູດສະຫວັນທີ່ສົນທະນາກັບຂ້າພະເຈົ້າໄດ້ກັບຄືນມາອີກ ແລະປຸກຂ້າພະເຈົ້າເໝືອນປຸກ
ຄົນຜູ້ໜຶ່ງໃຫ້ຕື່ນຈາກການນອນຫລັບ [2]ແລະເພິ່ນໄດ້ຖາມຂ້າພະເຈົ້າວ່າ "ເຈົ້າເຫັນຫຍັງ" ຂ້າ-
ພະເຈົ້າຕອບວ່າ "ເບິ່ງແມ ຂ້າພະເຈົ້າໄດ້ເຫັນເຄື່ອງຮອງຕີນໂຄມທີ່ເຮັດດ້ວຍທອງຄຳລ້ວນໆອັນ
ໜຶ່ງ ມີຈອກໜ່ວຍໜຶ່ງຢູ່ເທິງຍອດຂອງມັນ ແລະມີໂຄມໄຟເຈັດໜ່ວຍຢູ່ເທິງເຄື່ອງຮອງຕີນໂຄມ
ແລະມີຮາງລິນເຈັດຮາງສຳລັບໂຄມໄຟທຸກໜ່ວຍທີ່ຢູ່ເທິງຍອດໂຄມນັ້ນ [3]ມີຕົ້ນໝາກກອກເທດ
ສອງຕົ້ນຢູ່ໃກ້ໂຄມໄຟ ຢູ່ເບື້ອງຂວາຈອກນັ້ນຕົ້ນໜຶ່ງ ແລະຢູ່ເບື້ອງຊ້າຍຕົ້ນໜຶ່ງ" [4]ແລະຂ້າພະ-
ເຈົ້າຖາມທູດສະຫວັນຜູ້ທີ່ສົນທະນາກັບຂ້າພະເຈົ້າວ່າ "ເຈົ້ານາຍເອີຍ ສິ່ງເຫລົ່ານີ້ຄືຫຍັງ" [5]ທູດ-
ສະຫວັນທີ່ສົນທະນາກັບຂ້າພະເຈົ້າຕອບຂ້າພະເຈົ້າວ່າ "ສິ່ງເຫລົ່ານີ້ຄືຫຍັງ ເຈົ້າບໍ່ຮູ້ບໍ" ຂ້າພະ-
ເຈົ້າຕອບວ່າ "ເຈົ້ານາຍເຈົ້າເອີຍ ຂ້າພະເຈົ້າບໍ່ຮູ້" [6]ແລ້ວເພິ່ນໄດ້ຕອບ ແລະໄດ້ບອກຂ້າພະເຈົ້າ
ວ່າ "ນີ້ເປັນພຣະທຳຂອງພຣະຜູ້ເປັນເຈົ້າທີ່ໄດ້ໃຫ້ໄວ້ກັບເຊຣູບາເບນວ່າ ບໍ່ແມ່ນດ້ວຍກຳລັງ ບໍ່
ແມ່ນດ້ວຍອຳນາດ ແຕ່ດ້ວຍພຣະວິນຍານຂອງເຮົາ ພຣະຜູ້ເປັນເຈົ້າແຫ່ງຈັກກະວານກ່າວດັ່ງ-
ນີ້ແຫລະ." [7]ໂອ ພູເຂົາໃຫຍ່ ເຈົ້າເຫັນສິ່ງໃດແດ່ ຕໍ່ໜ້າເຊຣູບາເບນເຈົ້າຈະເປັນທົ່ງພຽງ ແລະ
ທ່ານຈະນຳກ້ອນຫີນທີ່ຢູ່ເທິງຍອດອອກມາທ່າມກາງສຽງໂຫ່ຮ້ອງວ່າ 'ພຣະຄຸນ ພຣະຄຸນສຳລັບ
ຫີນນັ້ນ'"

## ເຊຣູບາເບນຈະສ້າງພຣະວິຫານໃຫ້ສຳເລັດ

[8]ແລະພຣະທຳຂອງພຣະຜູ້ເປັນເຈົ້າໄດ້ມາເຖິງຂ້າພະເຈົ້າກ່າວວ່າ [9]"ມືຂອງເຊຣູບາເບນໄດ້
ວາງຮາກຖານຂອງພຣະວິຫານນີ້ລົງ ແລະມືຂອງເພິ່ນຈະສ້າງໃຫ້ສຳເລັດ ແລ້ວເຈົ້າຈະຮູ້ວ່າ
ພຣະຜູ້ເປັນເຈົ້າແຫ່ງຈັກກະວານໄດ້ໃຊ້ຂ້າພະເຈົ້າມາຫາພວກເຈົ້າ [10]ເພາະວ່າຜູ້ໃດທີ່ປະໝາດ
ວັນແຫ່ງການເລັກນ້ອຍນັ້ນຈະໄດ້ຊົມຊື່ນຍິນດີ ແລະຈະໄດ້ເຫັນສາຍດິ່ງທີ່ຢູ່ໃນມືຂອງເຊຣູບາ-
ເບນພ້ອມກັບສິ່ງທັງເຈັດນັ້ນ ຄືບັນດາພຣະເນດຂອງພຣະຜູ້ເປັນເຈົ້າ ຊຶ່ງຫລຽວເບິ່ງຢູ່ທົ່ວໂລກ"
[11]ແລ້ວຂ້າພະເຈົ້າຈຶ່ງຖາມທູດສະຫວັນນັ້ນວ່າ "ຕົ້ນໝາກກອກເທດສອງຕົ້ນທີ່ຢູ່ເບື້ອງຂວາ
ແລະເບື້ອງຊ້າຍຂອງເຄື່ອງຮອງຕີນໂຄມນັ້ນແມ່ນຫຍັງ" [12]ແລະຂ້າພະເຈົ້າຖາມເພິ່ນເປັນເທື່ອທີ
ສອງວ່າ "ກິ່ງທັງສອງຂອງຕົ້ນໝາກກອກເທດທີ່ມີນ້ຳມັນໄຫລລົງມາຂ້າງຮາງລິນຄຳທັງສອງນັ້ນ
ແມ່ນຫຍັງ" [13]ເພິ່ນເວົ້າກັບຂ້າພະເຈົ້າວ່າ "ເຈົ້າບໍ່ຮູ້ຈັກບໍວ່າ ສິ່ງນັ້ນແມ່ນໝາຍເຖິງອັນໃດ" ຂ້າ-
ພະເຈົ້າຕອບວ່າ "ນາຍເຈົ້າເອີຍ ຂ້ານ້ອຍບໍ່ຮູ້ຈັກ" [14]ແລ້ວທູດສະຫວັນໄດ້ຕອບວ່າ "ທັງສອງນີ້ຄື
ຜູ້ທີ່ໄດ້ຮັບການເຈີມ ຊຶ່ງແມ່ນຜູ້ທີ່ຢືນຢູ່ຂ້າງອີງພຣະຜູ້ເປັນເຈົ້າແຫ່ງແຜ່ນດິນໂລກ"

# ບົດທີ 5

## ໜັງສືມ້ວນໜຶ່ງທີ່ເຫາະຢູ່ ຊຶ່ງເປັນຄຳສາບແຊ່ງ

1ຂ້າພະເຈົ້າຖອຍຫລັງກັບ ແລະເງີຍໜ້າຂຶ້ນອີກ ກໍຫລຽວເຫັນໜັງສືມ້ວນໜຶ່ງເຫາະຢູ່ 2ທູດ-
ສະຫວັນຈຶ່ງຖາມຂ້າພະເຈົ້າວ່າ “ເຈົ້າເຫັນຫຍັງ” ຂ້າພະເຈົ້າຕອບວ່າ “ຂ້າພະເຈົ້າຫລຽວເຫັນ
ໜັງສືມ້ວນໜຶ່ງເຫາະຢູ່ ມັນຍາວຊາວສອກ ແລະກວ້າງສິບສອກ” 3ແລ້ວທູດສະຫວັນໄດ້ບອກ
ຂ້າພະເຈົ້າວ່າ “ນີ້ແຫລະເປັນຄຳສາບແຊ່ງທີ່ແຜ່ອອກໄປທົ່ວພື້ນແຜ່ນດິນທັງໝົດ ພວກໂຈນຂີ້-
ລັກທຸກຄົນຈະຖືກຕັດອອກຕາມທີ່ຂຽນໄວ້ຂ້າງໃນນີ້ ແລະທຸກຄົນທີ່ປະຕິຍານບໍ່ຈິງຈະຕ້ອງຖືກ
ຕັດອອກຕາມບ່ອນທີ່ຂຽນໄວ້ໃນນັ້ນ 4ພຣະຜູ້ເປັນເຈົ້າແຫ່ງຈັກກະວານກ່າວວ່າ ເຮົາສົ່ງຄຳສາບ
ແຊ່ງນັ້ນອອກໄປ ແລະມັນຈະເຂົ້າໄປໃນເຮືອນຂອງໂຈນ ແລະໃນເຮືອນຂອງຄົນທີ່ສາບານບໍ່
ຈິງໂດຍອອກນາມຂອງເຮົາ ແລະຄຳນີ້ຈະຄ້າງຄືນຢູ່ໃນເຮືອນຜູ້ນັ້ນ ແລະຈະໄໝ້ເຮືອນນັ້ນ ທັງ
ໄມ້ແລະຫີນ”

## ຜູ້ຍິງໃນຖັງເອຟາ

5ທູດສະຫວັນຜູ້ທີ່ສົນທະນາກັບຂ້າພະເຈົ້າໄດ້ອອກມາເວົ້າກັບຂ້າພະເຈົ້າວ່າ “ຈົ່ງເງີຍໜ້າຂຶ້ນ
ເບິ່ງວ່າ ສິ່ງທີ່ອອກໄປນັ້ນແມ່ນຫຍັງ” 6ຂ້າພະເຈົ້າໄດ້ຖາມວ່າ “ສິ່ງນັ້ນແມ່ນຫຍັງ” ເພິ່ນໄດ້ຕອບ
ວ່າ “ນີ້ແມ່ນເອຟາທີ່ອອກໄປ” ແລະທູດສະຫວັນໄດ້ບອກອີກວ່າ “ນີ້ແມ່ນສິ່ງທີ່ຄ້າຍຄືຮູບປະພັນ
ຂອງພວກເຈົ້າໃນທົ່ວແຜ່ນດິນທັງໝົດ” 7ເບິ່ງແມ ຝາເອຟາທີ່ເຮັດດ້ວຍຕະກົ່ວກໍຖືກຍົກຂຶ້ນໄປ
ແລະມີຜູ້ຍິງຄົນໜຶ່ງນັ່ງຢູ່ໃນລະຫວ່າງກາງເອຟານັ້ນ 8ແລະທູດສະຫວັນໄດ້ກ່າວວ່າ “ນີ້ແມ່ນ
ຄວາມຊົ່ວຮ້າຍ” ຝ່າຍທູດສະຫວັນໄດ້ຊຸກຍິງນັ້ນເຂົ້າໃນເອຟາ ແລ້ວກໍເອົາຝາທີ່ເຮັດດ້ວຍຂີ້ກົ່ວ
ປິດປາກມັນໄວ້ 9ແລ້ວຂ້າພະເຈົ້າກໍເງີຍໜ້າຂຶ້ນຫລຽວເຫັນ ເບິ່ງແມ ມີຜູ້ຍິງສອງຄົນອອກມາ
ແລະມີລົມຢູ່ໃນປີກຂອງນາງ ປີກນັ້ນຄ້າຍຄືປີກຂອງນົກຊຸ້ມ ແລະນາງໄດ້ເອົາເອຟາຍົກຂຶ້ນລະ-
ຫວ່າງແຜ່ນດິນໂລກ ແລະຟ້າສະຫວັນ 10ແລ້ວຂ້າພະເຈົ້າໄດ້ຖາມທູດສະຫວັນຜູ້ທີ່ສົນທະນາກັບ
ຂ້າພະເຈົ້າວ່າ “ນາງເຫລົ່ານັ້ນຈະເອົາເອຟາໄປໃສ” 11ທູດສະຫວັນໄດ້ຕອບຂ້າພະເຈົ້າວ່າ “ໄປ
ກໍ່ສ້າງເຮືອນຂອງມັນໃນແຜ່ນດິນຊີນາຍ ເມື່ອເຮືອນສຳເລັດແລ້ວ ນາງຈະວາງເອຟາໄວ້ເທິງ
ບ່ອນນັ້ນ”

# ບົດທີ 6

## ລົດຮົບສີ່ຄັນ

1ຂ້າພະເຈົ້າໄດ້ຖອຍຫລັງກັບແລະ ເງີຍໜ້າຂຶ້ນອີກ ເບິ່ງແມ ມີລົດຮົບສີ່ຄັນອອກມາລະຫວ່າງ
ກາງພູເຂົາສອງໜ່ວຍ ພູເຂົານັ້ນເປັນທອງເຫລືອງ 2ລົດຮົບຄັນທຳອິດມີມ້າສີແດງ ຄັນທີສອງມີ
ມ້າສີດຳ 3ຄັນທີສາມມ້າສີຂາວ ຄັນທີສີ່ມ້າດ່າງສີເທົາທີ່ມີກຳລັງຫລາຍ 4ແລ້ວຂ້າພະເຈົ້າໄດ້ຖາມ
ທູດສະຫວັນຜູ້ທີ່ສົນທະນາກັບຂ້າພະເຈົ້າວ່າ “ເຈົ້ານາຍເອີຍ ສິ່ງເຫລົ່ານີ້ແມ່ນຫຍັງ” 5ທູດສະ-
ຫວັນນັ້ນໄດ້ຕອບ ແລະບອກຂ້າພະເຈົ້າວ່າ “ເຫລົ່ານີ້ເປັນພຣະວິນຍານສີ່ດວງແຫ່ງຟ້າສະຫວັນ
ຊຶ່ງອອກມາຫລັງຈາກທີ່ໄດ້ຢືນຢູ່ຕໍ່ພຣະພັກຂອງອົງພຣະຜູ້ເປັນເຈົ້າແຫ່ງແຜ່ນດິນໂລກ 6ລົດທີ່ມີ

ມ້າດຳອອກໄປສູ່ທິດເໜືອ ມ້າສີຂາວຕິດຕາມມ້າດຳໄປ ແລະຕົວດ່າງສີເທົາອອກໄປສູ່ທິດໃຕ້"
7ມ້າທີ່ມີກຳລັງຫລາຍຊອກຫາທີ່ຈະເດີນທາງໄປມາເທິງແຜ່ນດິນໂລກ ແລະທູດສະຫວັນໄດ້ບອກ
ວ່າ "ໄປແມ ທ່ຽວໄປເທິງແຜ່ນດິນໂລກ" ດັ່ງນັ້ນມ້າເຫລົ່ານັ້ນຈຶ່ງທ່ຽວໄປມາເທິງແຜ່ນດິນໂລກ
8ແລ້ວທູດສະຫວັນໄດ້ຮ້ອງບອກຂ້າພະເຈົ້າວ່າ "ເບິ່ງແມ ມ້າເຫລົ່ານີ້ທີ່ອອກໄປຍັງປະເທດທາງ
ທິດເໜືອນັ້ນໄດ້ເຮັດໃຫ້ຈິດວິນຍານຂອງເຮົາງຽບສະຫງົບໃນປະເທດທາງທິດເໜືອ"

9ແລະພຣະທຳຂອງ ພຣະຜູ້ເປັນເຈົ້າ ໄດ້ມາເຖິງຂ້າພະເຈົ້າວ່າ 10"ຈົ່ງນຳເອົາຂອງຖວາຍຈາກ
ບັນດາຄົນທັງຫລາຍທີ່ຖືກກວາດຈາກ ເຮນດາຍ ໂຕບີຢາ ແລະ ເຢດາຢາ ໃນວັນດຽວກັນນັ້ນ
ຈົ່ງເຂົ້າໄປໃນເຮືອນຂອງ ໂຢສີຢາ ລູກຊາຍ ເຊຟານີຢາ ບ່ອນທີ່ລາວໄດ້ອອກມາຈາກນະຄອນ
ບາບີໂລນ 11ຈົ່ງເອົາເງິນ ແລະຄຳເຮັດເປັນມົງກຸດຫລາຍອັນ ແລະສວມໃສ່ເທິງຫົວຂອງ ໂຢ-
ຊວຍ ລູກຊາຍ ເຢໂຮຊາດັກ ມະຫາປະໂລຫິດ 12ແລະຈົ່ງບອກເພິ່ນວ່າ 'ພຣະຜູ້ເປັນເຈົ້າ ແຫ່ງ
ຈັກກະວານໄດ້ກ່າວດັ່ງນີ້ວ່າ ເບິ່ງແມ ມີຊາຍຜູ້ທີ່ມີຊື່ວ່າພຣະກິ່ງ? ທ່ານຈະໄພບູນໃນສະຖານທີ່
ຂອງທ່ານ ແລະຈະກໍ່ສ້າງພຣະວິຫານຂອງ ພຣະຜູ້ເປັນເຈົ້າ 13ທ່ານຜູ້ນີ້ແຫລະຈະເປັນຜູ້ສ້າງ
ພຣະວິຫານຂອງ ພຣະຜູ້ເປັນເຈົ້າ ແລະຈະໄດ້ຮັບກຽດຕິຍົດ ຈະປະທັບແລະປົກຄອງຢູ່ເທິງລາ-
ຊະບັນລັງຂອງທ່ານ ແລະທ່ານຈະເປັນປະໂລຫິດຢູ່ເທິງລາດຊະບັນລັງຂອງທ່ານ ແລະການ
ປຶກສາຫາລືກັນຢ່າງສັນຕິຈະມີຢູ່ລະຫວ່າງທ່ານທັງສອງ' 14ແລະມົງກຸດເຫລົ່ານັ້ນຈະຢູ່ໃນພຣະ-
ວິຫານຂອງ ພຣະຜູ້ເປັນເຈົ້າ ເພື່ອເປັນທີ່ລະນຶກເຖິງ ເຮນດາຍ ໂຕບີຢາ ເຢດາຢາ ແລະ ເຮັນ
ລູກຊາຍຂອງ ເຊຟານີຢາ 15ບັນດາຜູ້ທີ່ຢູ່ຫ່າງໄກຈະມາຊ່ວຍໃນການກໍ່ສ້າງພຣະວິຫານຂອງ
ພຣະຜູ້ເປັນເຈົ້າ ແລະພວກທ່ານຈະຮູ້ຈັກວ່າ ພຣະຜູ້ເປັນເຈົ້າ ແຫ່ງຈັກກະວານໄດ້ໃຊ້ຂ້າພະເຈົ້າ
ມາຫາພວກທ່ານ ສິ່ງທັງປວງນີ້ຈະບັງເກີດຂຶ້ນມາຖ້າພວກທ່ານເຊື່ອຟັງຖ້ອຍຄຳຂອງ ພຣະຜູ້-
ເປັນເຈົ້າ ພຣະເຈົ້າຂອງທ່ານຢ່າງສັດຊື່"

# ບົດທີ 7

## ພຣະອົງຊົງຕຳໜິການອົດອາຫານທີ່ບໍ່ຈິງໃຈ

1ຕໍ່ມາໃນປີທີສີ່ຂອງກະສັດ ດາຣິອຸດ ພຣະທຳຂອງ ພຣະຜູ້ເປັນເຈົ້າ ໄດ້ມາເຖິງ ເຊຄາຣີຢາ.
ໃນວັນທີສີ່ ເດືອນທີ ເກົ້າ ຊຶ່ງເປັນເດືອນ ກິດຊະເລັບ 2ເມື່ອຊາວ ເມືອງ ໄດ້ໃຊ້ທ່ານ ຊາເຣັດເຊ
ແລະ ເຣເກມ-ເມເລັກ ພ້ອມກັບພັກພວກຂອງເພິ່ນ ໄປຍັງພຣະວິຫານຂອງພຣະເຈົ້າ ທູນຂໍ
ພຣະກະລຸນາຕໍ່ພຣະພັກພຣະອົງ 3ແລະຕໍ່ບັນດາປະໂລຫິດທີ່ຢູ່ໃນພຣະວິຫານຂອງ ພຣະຜູ້ເປັນ-
ເຈົ້າ ແຫ່ງຈັກກະວານ ແລະຕໍ່ຜູ້ປະກາດພຣະທຳວ່າ "ຂ້າພະເຈົ້າຈະໄວ້ທຸກ ແລະຢູ່ຕ່າງຫາກໃນ
ເດືອນທີຫ້າ ຄືທີ່ຂ້າພະເຈົ້າໄດ້ເຮັດມາແລ້ວໃນຫລາຍປີນັ້ນໄດ້ບໍ" 4ແລ້ວພຣະທຳຂອງ ພຣະຜູ້-
ເປັນເຈົ້າ ແຫ່ງຈັກກະວານໄດ້ມາເຖິງຂ້າພະເຈົ້າວ່າ 5"ຈົ່ງກ່າວແກ່ປະຊາຊົນທັງໝົດໃນແຜ່ນດິນ
ແລະແກ່ບັນດາປະໂລຫິດວ່າ ເມື່ອເຈົ້າທັງຫລາຍອົດອາຫານແລະໄວ້ທຸກໃນເດືອນທີຫ້າ ແລະ
ເດືອນທີເຈັດໃນລະຫວ່າງເຈັດສິບປີນັ້ນ ພວກເຈົ້າໄດ້ເຮັດສຳລັບເຮົາແທ້ບໍ? ພວກເຈົ້າໄດ້ຖືສິນ
ອົດອາຫານເພື່ອເຮົາບໍ? 6ເມື່ອເຈົ້າກິນ ແລະເມື່ອເຈົ້າດື່ມ ເຈົ້າກໍກິນເພື່ອຕົວຂອງເຈົ້າເອງ ແລະ

ດື່ມເພື່ອຕົວເຈົ້າເອງບໍ່ແມ່ນບໍ? 7ຖ້ອຍຄຳເຫລົ່ານີ້ເປັນພຣະທຳຊຶ່ງ ພຣະຜູ້ເປັນເຈົ້າ ປະກາດ ໂດຍ
ຜູ້ປະກາດພຣະທຳລຸ້ນກ່ອນໆ ບໍ່ແມ່ນບໍ? ໃນເວລາ ເຢຣູຊາເລັມ ມີຄົນຢູ່ ແລະມີຄວາມສຸກສະ-
ບາຍພ້ອມທັງຫົວເມືອງຕ່າງໆທີ່ຢູ່ອ້ອມຮອບ ພາກໃຕ້ ແລະເຂດທົ່ງພຽງກໍມີຄົນຢູ່”

## ຈົ່ງສະແຫວງຫາພຣະເຈົ້າ ຄວາມຊອບທຳ ແລະຄວາມປານີ

8ແລະພຣະທຳຂອງ ພຣະຜູ້ເປັນເຈົ້າ ມາເຖິງ ເຊຄາຣີຢາ ວ່າ 9“ພຣະຜູ້ເປັນເຈົ້າ ແຫ່ງຈັກກະ-
ວານກ່າວດັ່ງນີ້ວ່າ ຈົ່ງຕັດສິນຕາມຄວາມຈິງ ຈົ່ງສະແດງຄວາມເມດຕາກະລຸນາ ແລະຄວາມ
ປານີຕໍ່ກັນແລະກັນ 10ຢ່າບີບບັງຄັບແມ່ໝ້າຍ ລູກກຳພ້າ ຄົນຕ່າງດ້າວຫລືຄົນຍາກຈົນ ແລະຢ່າ
ຄິດອຸບາຍຊົ່ວໃນໃຈຕໍ່ສູ້ຊຶ່ງກັນແລະກັນ” 11ແຕ່ພວກເຂົາປະຕິເສດບໍ່ຍອມຟັງ ແລະຂັດຂວາງ
ດ້ວຍບ່າທີ່ດື້ດຶງ ແລະໃຫ້ຫູຂອງພວກເຂົາໜັກ ພວກເຂົາຈຶ່ງຈະບໍ່ໄດ້ຍິນ 12ພວກເຂົາໄດ້ເຮັດໃຫ້
ໃຈຂອງຕົນຄືຫີນເພັດ ຈຶ່ງບໍ່ໄດ້ຍິນພຣະບັນຍັດ ແລະບັນດາຖ້ອຍຄຳທີ່ ພຣະຜູ້ເປັນເຈົ້າ ແຫ່ງ
ຈັກກະວານໄດ້ສົ່ງໄປ ໂດຍວິນຍານຂອງພຣະອົງ ເຫດສະນັ້ນ ພຣະພິໂລດທີ່ຍິ່ງໃຫຍ່ຈຶ່ງໄດ້ມາ
ຈາກ ພຣະຜູ້ເປັນເຈົ້າ ແຫ່ງຈັກກະວານ 13ແລະຢູ່ຕໍ່ມາ ພຣະຜູ້ເປັນເຈົ້າ ແຫ່ງຈັກກະວານກ່າວວ່າ
“ເມື່ອເຮົາຮ້ອງ ພວກເຂົາບໍ່ຟັງສັນໃດ ເມື່ອພວກເຂົາຮ້ອງທູນເຮົາ ເຮົາກໍບໍ່ຟັງສັນນັ້ນ 14ເຮົາໄດ້
ໃຫ້ພວກເຂົາກະຈັດກະຈາຍໄປດ້ວຍລົມບ້າໝູທ່າມກາງຄົນຕ່າງຊາດທັງໝົດ ຊຶ່ງພວກເຂົາບໍ່ໄດ້
ຮູ້ຈັກ ດັ່ງນັ້ນ ແຜ່ນດິນທີ່ພວກເຂົາປະຖິ້ມໄປນັ້ນຈຶ່ງຮ້າງເປົ່າ ບໍ່ມີໃຜທ່ຽວໄປມາໃນບ່ອນນັ້ນ
ແລະແຜ່ນດິນທີ່ສຸກສະບາຍກໍຮ້າງເປົ່າ

# ບົດທີ 8

## ບັນດາພຣະສັນຍາຂອງພຣະເຈົ້າຕໍ່ອິສຣາເອນບໍ່ປ່ຽນແປງ

1ພຣະທຳຂອງ ພຣະຜູ້ເປັນເຈົ້າ ແຫ່ງຈັກກະວານມາເຖິງຂ້າພະເຈົ້າອີກວ່າ 2“ພຣະຜູ້ເປັນເຈົ້າ
ແຫ່ງຈັກກະວານກ່າວດັ່ງນີ້ວ່າ ເຮົາຫວງແຫນຊີໂອນ ດ້ວຍຄວາມຫວງແຫນອັນຍິ່ງໃຫຍ່ ແລະ
ເຮົາຫວງແຫນດ້ວຍຄວາມຄຽດຮ້າຍທີ່ເຜົາຮ້ອນຍ້ອນເມືອງນັ້ນ 3ພຣະຜູ້ເປັນເຈົ້າ ກ່າວດັ່ງນີ້ວ່າ
ເຮົາຈະກັບໄປຍັງຊີໂອນອີກ ແລະເຮົາຈະສະຖິດຢູ່ທ່າມກາງນະຄອນ ເຢຣູຊາເລັມ ແລະ ເຢຣູ-
ຊາເລັມ ຈະຊື່ວ່າເມືອງແຫ່ງຄວາມຈິງ ແລະພູເຂົາຂອງ ພຣະຜູ້ເປັນເຈົ້າ ແຫ່ງຈັກກະວານຈະຊື່ວ່າ
ພູເຂົາບໍລິສຸດ 4ພຣະຜູ້ເປັນເຈົ້າ ແຫ່ງຈັກກະວານກ່າວດັ່ງນີ້ວ່າ ຊາຍເຖົ້າແລະຍິງເຖົ້າຈະອາໄສຢູ່
ຕາມຖະໜົນໃນ ເຢຣູຊາເລັມ ທຸກຄົນມີໄມ້ເທົ້າຢູ່ໃນມືເພາະອາຍຸຫລາຍແລ້ວ 5ໃນຖະໜົນຈະເຕັມ
ໄປດ້ວຍພວກເດັກນ້ອຍຜູ້ຊາຍແລະເດັກນ້ອຍຜູ້ຍິງແລ່ນຫລິ້ນຢູ່ຕາມຖະໜົນກວ້າງນັ້ນ 6ພຣະຜູ້-
ເປັນເຈົ້າ ແຫ່ງຈັກກະວານກ່າວດັ່ງນີ້ວ່າ ຖ້າເລື່ອງນີ້ເປັນເລື່ອງປະຫລາດໃນສາຍຕາຂອງປະຊາ-
ຊົນທີ່ຍັງເຫລືອຢູ່ໃນສະໄໝນີ້ແລ້ວ ໃນຄາວນັ້ນກໍຈະປະຫລາດໃນສາຍຕາຂອງເຮົາເໝືອນກັນ
7ພຣະຜູ້ເປັນເຈົ້າ ແຫ່ງຈັກກະວານກ່າວດັ່ງນີ້ວ່າ ເບິ່ງແມ ເຮົາຈະຊ່ວຍປະຊາຊົນຂອງເຮົາໃຫ້ພົ້ນ
ຈາກປະເທດທາງທິດຕາເວັນອອກ ແລະຈາກປະເທດທາງທິດຕາເວັນຕົກ 8ເຮົາຈະພາພວກເຂົາ
ມາ ແລະໄປອາໄສຢູ່ທ່າມກາງນະຄອນ ເຢຣູຊາເລັມ ແລະພວກເຂົາຈະເປັນປະຊາຊົນຂອງເຮົາ
ແລະເຮົາຈະເປັນ ພຣະເຈົ້າ ຂອງພວກເຂົາ ດ້ວຍຄວາມຈິງແລະດ້ວຍຄວາມຊອບທຳ

## ປະຊາຊົນຈຶ່ງເຊື່ອຟັງຖ້ອຍຄຳຂອງພວກຜູ້ປະກາດພຣະທຳ

[9]ພຣະຜູ້ເປັນເຈົ້າ ແຫ່ງຈັກກະວານກ່າວວ່າ ຈົ່ງໃຫ້ມືຂອງພວກເຈົ້າເຂັ້ມແຂງ, ເຈົ້າທັງຫລາຍ
ຜູ້ໄດ້ຍິນຖ້ອຍຄຳເຫລົ່ານີ້ໃນເວລານີ້ຊຶ່ງມາຈາກປາກຂອງບັນດາຜູ້ປະກາດພຣະທຳ ໃນມື້ທີ່ພວກ
ເຂົາໄດ້ວາງຮາກຖານພຣະວິຫານຂອງ ພຣະຜູ້ເປັນເຈົ້າ ແຫ່ງຈັກກະວານ ເພື່ອວ່າຈະໄດ້ກໍ່ສ້າງ
ພຣະວິຫານນັ້ນຂຶ້ນ [10]ເພາະວ່າສະໄໝກ່ອນນັ້ນບໍ່ມີຄ່າຈ້າງສຳລັບຄົນແລະສັດ ບໍ່ມີຄວາມສະ-
ຫງົບສຸກແກ່ຜູ້ທີ່ໄປໆມາໆ ຍ້ອນຄວາມຂັດສົນ ແລະເຮົາປ່ອຍໃຫ້ທຸກຄົນຕໍ່ສູ້ກັບເພື່ອນບ້ານ
ຂອງຕົນ [11]ພຣະຜູ້ເປັນເຈົ້າ ແຫ່ງຈັກກະວານກ່າວວ່າ “ບັດນີ້ເຮົາຈະບໍ່ເຮັດຕໍ່ປະຊາຊົນທີ່ເຫລືອຢູ່
ນີ້ເໝືອນກັບສະໄໝກ່ອນ” [12]ເພາະວ່າເຄື່ອງປູກຂອງຝັງຈະງອກຈະເລີນໃຫຍ່ຂຶ້ນ ເຄືອອະງຸ່ນ
ຈະມີໝາກ ແລະແຜ່ນດິນຈະເກີດພືດຜົນ ແລະທ້ອງຟ້າອາກາດຈະໃຫ້ມີນ້ຳໝອກຕົກ ແລະເຮົາ
ຈະໃຫ້ປະຊາຊົນທີ່ເຫລືອຢູ່ນີ້ໄດ້ເປັນກຳມະສິດ [13]ໂອ ຄອບຄົວຢູດາ ແລະຄອບຄົວເຊື້ອສາຍ
ອິສຣາເອນ ເອີຍ ເຈົ້າເຄີຍຖືກສາບແຊ່ງທ່າມກາງບັນດາພວກຕ່າງຊາດຢ່າງໃດ ຕໍ່ມາເຮົາຈະ
ຊ່ວຍພວກເຈົ້າ ແລະພວກເຈົ້າຈະໄດ້ເປັນແຫລ່ງພຣະພອນຢ່າງນັ້ນ ຢ່າຢ້ານເລີຍ ແຕ່ຈົ່ງໃຫ້ມື
ຂອງເຈົ້າເຂັ້ມແຂງສາ [14]ເພາະ ພຣະຜູ້ເປັນເຈົ້າ ແຫ່ງຈັກກະວານກ່າວດັ່ງນີ້ວ່າ ເຮົາໄດ້ຄິດວ່າຈະ
ເຮັດອັນຕະລາຍແກ່ພວກເຈົ້າຢ່າງໃດ ເມື່ອບັນພະບູລຸດຂອງພວກເຈົ້າຍົວະໃຫ້ເຮົາຮ້າຍ ແລະ
ເຮົາບໍ່ໄດ້ກັບໃຈຈາກສິ່ງນັ້ນ ພຣະຜູ້ເປັນເຈົ້າ ແຫ່ງຈັກກະວານກ່າວດັ່ງນີ້ແຫລະ [15]ດັ່ງນັ້ນ ໃນ
ວັນນີ້ ເຮົາຕັ້ງໃຈອີກວ່າ ເຮົາຈະກະທຳດີຕໍ່ເຢຣູຊາເລັມ ແລະຕໍ່ເຊື້ອສາຍຢູດາ ຢ່າຊູຢ້ານເລີຍ
[16]ຈົ່ງເຮັດສິ່ງເຫລົ່ານີ້ຄື ທຸກຄົນຈົ່ງເວົ້າແຕ່ຄວາມຈິງກັບເພື່ອນບ້ານ ຈົ່ງຕັດສິນຕາມຄວາມຈິງ
ແລະສ້າງສັນຕິ ພາບຢູ່ທີ່ປະຕູເມືອງຂອງທ່ານ [17]ຢ່າຄິດອຸບາຍຊົ່ວໃນໃຈເພື່ອຕໍ່ສູ້ເພື່ອນບ້ານ
ຢ່າຮັກຄຳປະຕິຍານບໍ່ຈິງ ດ້ວຍວ່າສິ່ງທັງປວງເຫລົ່ານີ້ເຮົາກຽດຊັງ” ພຣະຜູ້ເປັນເຈົ້າກ່າວດັ່ງນີ້
ແຫລະ [18]ແລະພຣະທຳຂອງ ພຣະຜູ້ເປັນເຈົ້າ ແຫ່ງຈັກກະວານມາເຖິງຂ້າພະເຈົ້າວ່າ [19]“ພຣະຜູ້-
ເປັນເຈົ້າ ແຫ່ງຈັກກະວານກ່າວດັ່ງນີ້ວ່າ ການອົດອາຫານໃນເດືອນທີສີ່ ການອົດອາຫານໃນ
ເດືອນທີຫ້າແລະການອົດອາຫານໃນເດືອນທີເຈັດ ແລະການອົດອາຫານໃນເດືອນທີສິບ ຈະ
ເປັນທີ່ໃຫ້ເກີດຄວາມຊົມຊື່ນຍິນດີ ແລະມ່ວນຊື່ນ ເປັນການກິນລ້ຽງທີ່ໃຫ້ຄວາມມ່ວນຊື່ນສະໜຸກ
ສະໜານແກ່ເຊື້ອສາຍຢູດາ ເຫດສະນັ້ນ ເຈົ້າຈົ່ງຮັກຄວາມຈິງ ແລະຄວາມສະຫງົບສຸກ

## ເຢຣູຊາເລັມຈະເປັນເມືອງຫລວງຂອງທັງໂລກ

[20]ພຣະຜູ້ເປັນເຈົ້າ ແຫ່ງຈັກກະວານກ່າວດັ່ງນີ້ວ່າ ຊົນຊາດທັງຫລາຍ ແລະປະຊາຊົນທີ່ຍັງມາ
ອາໄສຢູ່ໃນຫລາຍຫົວເມືອງ [21]ຊາວເມືອງໜຶ່ງຈະໄປຫາຊາວເມືອງອີກເມືອງໜຶ່ງ ກ່າວວ່າ ‘ຈົ່ງ
ໄປ ຈົ່ງພາກັນໄປອ້ອນວອນຕໍ່ພຣະຜູ້ເປັນເຈົ້າ ແລະສະແຫວງຫາພຣະຜູ້ເປັນເຈົ້າ ແຫ່ງຈັກກະ-
ວານ ຂ້າພະເຈົ້າທັງຫລາຍກໍຈະໄປດ້ວຍ’ [22]ຊົນຊາດທັງຫລາຍ ແລະບັນດາປະຊາຊາດທີ່ເຂັ້ມ-
ແຂງຈະມາສະແຫວງຫາ ພຣະຜູ້ເປັນເຈົ້າ ແຫ່ງຈັກກະວານໃນ ເຢຣູຊາເລັມ ແລະອ້ອນວອນ
ພຣະຜູ້ເປັນເຈົ້າ [23]ພຣະຜູ້ເປັນເຈົ້າ ແຫ່ງຈັກກະວານກ່າວດັ່ງນີ້ວ່າ ຕໍ່ມາໃນສະໄໝນັ້ນ ສິບຄົນ
ຈາກປະຊາຊາດທຸກໆພາສາຈະຈັບປີກເສື້ອຄຸມຂອງຊາວຢິວຄົນໜຶ່ງໄວ້ແລ້ວກ່າວວ່າ ‘ພວກເຮົາ
ຈະໄປນຳທ່ານ ເພາະພວກເຮົາໄດ້ຍິນວ່າພຣະເຈົ້າສະຖິດຢູ່ກັບທ່ານ’”

# ບົດທີ 9

## ຄຳກ່າວຂອງພຣະເຈົ້າເລື່ອງປະເທດຕ່າງໆ ທີ່ຢູ່ອ້ອມຮອບ

[1]ພຣະໂອວາດແຫ່ງພຣະທຳຂອງພຣະຜູ້ເປັນເຈົ້າໃນ ແຜ່ນດິນຮັດຣັກ ແລະເມືອງດາມາເຊ
ຈະເປັນບ່ອນພຣະທຳນັ້ນພັກຢູ່ (ເຫດວ່າ ພຣະເຈົ້າຊົງປັກຕາເບິ່ງຄົນທັງຫລາຍ ແລະຕະກູນອິ-
ສຣາເອນທັງໝົດ) [2]ເມືອງຮຳມາດ ຊຶ່ງມີເຂດແດນຕິດກັນກໍລວມຢູ່ນຳ ຕີເຣແລະຊີໂດນ ເຖິງ
ແມ່ນວ່າຈະເປັນເມືອງສະຫລາດກໍຕາມ [3]ເມືອງຕີເຣໄດ້ສ້າງທຳປ້ອມໄວ້ສຳລັບຕົນ ແລະສະສົມ
ເງິນໄວ້ເປັນກອງຄືກອງຂີ້ຝຸ່ນ ແລະຄຳບໍລິສຸດຄືຂີ້ຕົມຕາມຖະໜົນຫົນທາງ [4]ແຕ່ເບິ່ງແມ ອົງ
ພຣະຜູ້ເປັນເຈົ້າຈະຈັບເມືອງນີ້ໄປ ແລະຖິ້ມຊັບສິນຂອງພວກເຂົາລົງໄປໃນນ້ຳທະເລ ແລ້ວໄຟ
ຈະໄໝ້ເມືອງນີ້ [5]ເມືອງອາຊະກາໂລນຈະເຫັນເຫດການນັ້ນ ແລະມີຄວາມຢ້ານ ເມືອງຄາຊາກໍ
ຄືກັນ ແລະມີຄວາມເສົ້າເສຍໃຈຫລາຍຮ່ວມທັງເມືອງເອັກໂຣນດ້ວຍ ເພາະວ່າຄວາມຫວັງຂອງ
ເມືອງນີ້ຈະຫຍຸ້ງຍາກ ກະສັດຈາກເມືອງຄາຊາ ຈະພິນາດລົງ ແລະເມືອງອາຊະກາໂລນຈະບໍ່ມີ
ຄົນອາໄສຢູ່ [6]ພວກລູກທີ່ບໍ່ມີພໍ່ຈະມາຢູ່ໃນເມືອງອາຊະໂດດ ເຮົາຈະທຳລາຍຄວາມຈອງຫອງ
ຂອງຄົນຟີລິດສະຕິນ [7]ເຮົາຈະເອົາເລືອດຂອງພວກເຂົາອອກມາຈາກປາກຂອງພວກເຂົາ ແລະ
ເອົາສິ່ງເປື້ອນເປິອອກໄປຈາກຫວ່າງແຂ້ວຂອງພວກເຂົາ ແຕ່ຜູ້ທີ່ຈະເຫລືອຢູ່ນັ້ນ ພຣະເຈົ້າຂອງ
ພວກເຮົາຈະເປັນເໝືອນຫົວໜ້າຄົນໜຶ່ງໃນຢູດາ ແລະເອັກໂຣນຈະເໝືອນກັບຄົນເຢບຸດຜູ້ໜຶ່ງ
[8]ເຮົາຈະຕັ້ງຄ້າຍຢູ່ຂ້າງພຣະວິຫານຂອງເຮົາຊຶ່ງເປັນກອງຍາມ ເພື່ອຄົນທັງຫລາຍຈະບໍ່ຜ່ານໄປ
ມາໄດ້ ຈະບໍ່ໃຫ້ຜູ້ໃດມາບີບບັງຄັບຂົ່ມເຫງພວກເຂົາໄດ້ ເພາະດຽວນີ້ເຮົາໄດ້ເຫັນກັບຕາຂອງເຮົາ
ເອງ

## ກະສັດໃນອານາຄົດຂອງຊີໂອນ

[9]ໂອ ລູກສາວຊີໂອນເອີຍ ຈົ່ງຊື່ນບານ ໂອ ລູກສາວແຫ່ງເຢຣູຊາເລັມເອີຍ ຈົ່ງໂຫ່ຮ້ອງຍິນ-
ດີ ເບິ່ງແມ ກະສັດຂອງເຈົ້າສະເດັດມາຫາເຈົ້າແລ້ວ ຊຶ່ງເປັນຄວາມຍຸດຕິທຳ ແລະຄວາມພົ້ນ
ຄວາມຖ່ອມຕົວລົງ ແລະຂີ່ຢູ່ເທິງລາຄືລາໜຸ່ມ ລູກລາແມ່ໂຕໜຶ່ງ [10]ເຮົາຈະທຳລາຍລົດຮົບທີ່ມາ
ຈາກເອຟຣາຢິມ ແລະມ້າຈາກເຢຣູຊາເລັມ ທະນູສົງຄາມຈະຖືກດັບລົງໄປ ແລະພຣະອົງຈະ
ປະກາດສັນຕິສຸກແກ່ພວກຕ່າງຊາດ ແລະຈະຄຸ້ມຄອງຕັ້ງແຕ່ທະເລນີ້ໄປເຖິງທະເລນັ້ນ ແລະ
ຈາກແມ່ນ້ຳນັ້ນໄປເຖິງສຸດປາຍແຜ່ນດິນໂລກ [11]ຝ່າຍເຈົ້າກໍເໝືອນກັນ ດ້ວຍເລືອດແຫ່ງຄຳໝັ້ນ-
ສັນຍາຂອງເຮົາ ຈະປົດປ່ອຍພວກນັກໂທດອອກໄປຈາກຂຸມທີ່ບໍ່ມີນ້ຳ [12]ພວກນັກໂທດທີ່ມີຄວາມ
ໄວ້ວາງໃຈເອີຍ ຈົ່ງກັບໄປບ່ອນກຳບັງທີ່ເຂັ້ມແຂງ ໃນວັນນີ້ເຮົາປະກາດວ່າ ເຮົາຈະເອົາໜັງສື
ໄຖ່ໂທດສົ່ງຄືນໃຫ້ເຈົ້າ [13]ເພາະເຮົາໄດ້ຫ້າງຄັນທະນູຂອງຢູດາສຳລັບເຮົາ ເຮົາໄດ້ເອົາເອຟຣາ-
ຢິມໃສ່ຄັນທະນູຂອງເຮົາໃຫ້ເຕັມ ແລະເຮົາຈະປຸກພວກລູກຊາຍຂອງເຈົ້າໃຫ້ຕື່ນ ໂອ ຊີໂອນ
ເອີຍ ເຮົາຈະຕໍ່ສູ້ກັບລູກຊາຍທັງຫລາຍຂອງເຈົ້າ ໂອ ກຣີກເອີຍ ເຮົາຈະໃຫ້ເຈົ້າເປັນຄືດາບ
ຂອງຄົນທີ່ແຂງແຮງ [14]ແລ້ວພວກເຂົາຈະເຫັນພຣະຜູ້ເປັນເຈົ້າປາກົດຢູ່ເໜືອພວກເຂົາ ແລະລູກ
ທະນູຂອງພຣະອົງຈະອອກໄປເໝືອນດັ່ງຟ້າແມບ ອົງພຣະຜູ້ເປັນເຈົ້າຈະເປົ່າແກ ແລະສະເດັດ
ໄປໃນລົມຫົວກຸດທາງທິດໃຕ້ [15]ພຣະຜູ້ເປັນເຈົ້າແຫ່ງຈັກກະວານຈະປົກປ້ອງຮັກສາພວກເຂົາໄວ້

ແລະພວກເຂົາທັງຫລາຍຈະກິນຈົນໝົດກ້ຽງແລະຢຽບນັກຍິງກັນຖຸນລົງ ແລະຈະດື່ມເລືອດຂອງ
ເຂົາດັ່ງເຫລົ້າອະງຸ່ນ ແລະຈະອີ່ມເຕັມເໝືອນດັ່ງຊາມປຽກເໝືອນແຈຂອງແທ່ນບູຊາ [16]ໃນວັນ
ນັ້ນ ພຣະຜູ້ເປັນເຈົ້າ ພຣະເຈົ້າຂອງພວກເຂົາຈະຊ່ວຍພວກເຂົາ ເພາະພວກເຂົາທັງຫລາຍເປັນ
ໄພ່ພົນຂອງພຣະອົງພວກເຂົາຈະເປັນເໝືອນດັ່ງແກ້ວເພັດ ຊຶ່ງຕິດຢູ່ໃນມົງກຸດທີ່ສ່ອງແສງໃນ
ແຜ່ນດິນຂອງພຣະອົງ [17]ເຫດວ່າຄວາມດີຂອງພຣະອົງໃຫຍ່ຫລວງແທ້ໆ ແລະຄວາມສວຍງາມ
ຂອງພຣະອົງກໍງາມຫລາຍແທ້ໆ ເມັດເຂົ້າຈະເຮັດໃຫ້ຄົນໜຸ່ມຈະເລີນເຕີບໃຫຍ່ ແລະນໍ້າອະງຸ່ນ
ໃໝ່ຈະເຮັດໃຫ້ຍິງສາວຈະເລີນໄວ

# ບົດທີ 10

## ໃນອະນາຄົດ ຢູດາກັບອິສຣາເອນຈະຟື້ນເໝືອນເດີມ

[1]ຈົ່ງຂໍຈາກ ພຣະຜູ້ເປັນເຈົ້າ ໃຫ້ພຣະອົງໂຜດປະທານຝົນໃນຍາມຝົນທ້າຍລະດູ ພຣະຜູ້ເປັນ-
ເຈົ້າ ຈະໃຫ້ມີຟ້າແມບ ແລະພຣະອົງຈະປະທານຫ່າຝົນໃນທົ່ງນາແກ່ທຸກຄົນ [2]ເພາະວ່າຮູບເຄົາ-
ລົບປະຈຳເຮືອນເວົ້າບໍ່ໄດ້ ແລະພວກໝໍດູກໍເຫັນນິມິດບໍ່ຈິງ ໄດ້ເລົ່າຄວາມຝັນບໍ່ຈິງ ແລະໃຫ້ຄຳ
ເລົ້າໂລມໃຈອັບປະໂຫຍດ ເພາະສະນັ້ນ ພວກເຂົາໄດ້ປົບໜີເໝືອນກັບຝູງສັດນ້ອຍທີ່ຖືກຂົ່ມເຫງ
ແລະເໝືອນແກະທີ່ບໍ່ມີຜູ້ລ້ຽງ [3]“ຄວາມຮ້າຍຂອງເຮົາກໍຮຸນແຮງຂຶ້ນຕໍ່ສູ້ພວກຜູ້ລ້ຽງແກະ ແລະ
ເຮົາຈະລົງໂທດບັນດາແບ້ເຖິກ ເພາະ ພຣະຜູ້ເປັນເຈົ້າ ແຫ່ງຈັກກະວານໄດ້ເຝົ້າຍາມຝູງແກະ
ຂອງພຣະອົງຄືເຊື້ອສາຍຢູດາ ແລະໄດ້ເອົາພວກເຂົາ ເປັນມ້າສຳລັບລັດສະໝີຂອງພຣະອົງໃນ
ສົງຄາມ [4]ເສົາເອກມາຈາກພຣະອົງ ເຫລັກຕະປູມາຈາກພຣະອົງ ຄັນທະນູສູ້ຮົບມາຈາກພຣະອົງ
ແລະຜູ້ຄຸ້ມຄອງມາຈາກພຣະອົງທັງນັ້ນ [5]ໃນສົງຄາມພວກເຂົາຈະເປັນເໝືອນຊາຍໜຸ່ມທີ່ຢຽບຢໍ່າ
ຂີ້ຕົມຕາມຖະໜົນທັງຫລາຍ ແລະພວກເຂົາຈະສູ້ຮົບ ເພາະ ພຣະຜູ້ເປັນເຈົ້າ ສະຖິດຢູ່ກັບພວກ
ເຂົາ ແລະຄົນທີ່ຂີ່ມ້າຈະລະອາຍ [6]ເຮົາຈະໃຫ້ເຊື້ອສາຍຂອງຢູດາມີກຳລັງ ແລະເຮົາຈະຊ່ວຍ
ເຊື້ອສາຍຂອງໂຢເຊັບໃຫ້ລອດພົ້ນ ແລະເຮົາຈະນຳພວກເຂົາຄືນມາອີກ ເພາະເຮົາອີດູຕົນພວກ
ເຂົາ ແລະພວກເຂົາຈະເປັນເໝືອນກັບວ່າເຮົາບໍ່ໄດ້ປະຖິ້ມພວກເຂົາຈັກເທື່ອ ເພາະເຮົາຄື ພຣະ-
ຜູ້ເປັນເຈົ້າ ພຣະເຈົ້າຂອງພວກເຂົາ ເຮົາຈະຟັງຄຳອ້ອນວອນຂອງພວກເຂົາ [7]ແລ້ວ ເອຟຣາຢິມ
ຈະເປັນເໝືອນຊາຍໜຸ່ມຜູ້ໜຶ່ງ ແລະຈິດໃຈຂອງພວກເຂົາທັງຫລາຍຈະຊົມຊື່ນຍິນດີເໝືອນໄດ້
ດື່ມນໍ້າອະງຸ່ນ ພວກລູກຫລານຂອງພວກເຂົາຈະໄດ້ເຫັນ ແລະຊົມຊື່ນຍິນດີ ແລະຈິດໃຈຂອງ
ພວກເຂົາຈະຍິນດີລົ້ນເຫລືອໃນ ພຣະຜູ້ເປັນເຈົ້າ [8]ເຮົາຈະຜິວປາກຮ້ອງເອີ້ນພວກເຂົາ ແລະ
ຮວບຮວມພວກເຂົາໄວ້ ເພາະເຮົາໄດ້ໄຖ່ພວກເຂົາໄວ້ແລ້ວ ແລະພວກເຂົາຈະມີຫລວງຫລາຍ
ເໝືອນແຕ່ກ່ອນ

## ອິສຣາເອນຖືກກະຈັດກະຈາຍແລ້ວກັບຄືນມາ

[9]ເຮົາໄດ້ຫວ່ານພວກເຂົາໄປທ່າມກາງພວກຕ່າງຊາດ ແຕ່ພວກເຂົາຈະລະນຶກເຖິງເຮົາໃນບັນ-
ດາປະເທດທີ່ຫ່າງໄກນັ້ນ ພວກເຂົາຈະດຳລົງຊີວິດຢູ່ກັບລູກຫລານຂອງພວກເຂົາ ແລະພວກ
ເຂົາຈະກັບຄືນມາ [10]ເຮົາຈະນຳໜ້າພວກເຂົາມາອີກຈາກແຜ່ນດິນເອຢິບ ແລະຈະຮວບຮວມ

ພວກເຂົາມາຈາກປະເທດອັດຊີເຣຍ ແລະເຮົາຈະນຳພວກເຂົາມາເຖິງແຜ່ນດິນກີເລອາດ ແລະ
ພູເລບານອນ ຈົນຈະບໍ່ມີບ່ອນໃຫ້ພວກເຂົາຢູ່
[11]ພຣະອົງຈະສະເດັດຂ້າມທະເລແຫ່ງຄວາມທຸກ
ແລະໃນນ້ຳທະເລ ພຣະອົງຈະຕີຟອງນ້ຳ ແລະບ່ອນເລິກທັງໝົດຂອງແມ່ນ້ຳນິເລຈະບົກແຫ້ງ
ໄປ ຄວາມຈອງຫອງຂອງອັດຊີເຣຍຈະຕົກຕ່ຳ ແລະໄມ້ຄ້ອນສຳລັບກະສັດຂອງເອຢິບຈະຖືກ
ຖອດອອກໄປ
[12]ເຮົາຈະຊູກຳລັງແກ່ພວກເຂົາໃນພຣະຜູ້ເປັນເຈົ້າ ເຮົາຈະເຮັດໃຫ້ພວກເຂົາ
ເຂັ້ມແຂງໃນພຣະຜູ້ເປັນເຈົ້າ ແລະພວກເຂົາຈະເດີນທາງໄປມາໃນພຣະນາມຊື່ຂອງພຣະອົງ"
ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ

# ບົດທີ 11

[1]ພູເລບານອນເອີຍ ຈົ່ງໄຂບັນດາປະຕູຂອງເຈົ້າ ເພື່ອໄຟຈະໄດ້ເຜົາຜານໄມ້ແປກຂອງເຈົ້າ
[2]ຕົ້ນໄມ້ແປກເອີຍ ຈົ່ງຮ້ອງໄຫ້ສາ ເພາະໄມ້ສົນໄດ້ລົ້ມລົງແລ້ວ ພວກເຈົ້ານາຍໄດ້ພິນາດຈິບຫາຍ
ໄປແລ້ວ ໂອ ຕົ້ນໂອກເມືອງບາຊານເອີຍ ຈົ່ງຮ້ອງໄຫ້ ເພາະປ່າທຶບໄດ້ລົ້ມລົງໝົດແລ້ວ
[3]ພວກ
ຜູ້ລ້ຽງແກະກໍຍົກສຽງຮ້ອງໄຫ້ຂຶ້ນ ເພາະກຽດຕິຍົດຂອງພວກເຂົາກໍຖືກທຳລາຍໄປແລ້ວ ແລະຝູງ
ສິງໜຸ່ມໃຫຍ່ກໍແຜດສຽງຮ້ອງ ເພາະວ່າຄວາມຈອງຫອງຂອງແມ່ນ້ຳຢໍແດນຖືກທຳລາຍແລ້ວ

[4]ພຣະຜູ້ເປັນເຈົ້າ ພຣະເຈົ້າຂອງຂ້າພະເຈົ້າກ່າວດັ່ງນີ້ວ່າ "ຈົ່ງລ້ຽງຝູງສັດສຳລັບຂ້າ
[5]ແລະຜູ້
ທີ່ຂາຍສັດນັ້ນກ່າວວ່າ 'ຈົ່ງສັນລະເສີນພຣະຜູ້ເປັນເຈົ້າ ເພາະຂ້າພະເຈົ້າຮັ່ງມີແລ້ວ' ແລະຜູ້ລ້ຽງ
ແກະບໍ່ໄດ້ເສຍດາຍຝູງແກະນັ້ນເລີຍ
[6]ພຣະຜູ້ເປັນເຈົ້າກ່າວວ່າ ເພາະເຮົາຈະບໍ່ເສຍດາຍຊາວ
ແຜ່ນດິນນີ້ອີກຕໍ່ໄປ ເບິ່ງແມ ເຮົາຈະເຮັດໃຫ້ພວກເຂົາຕ່າງຄົນຕ່າງກໍຕົກເຂົ້າໄປໃນມືຂອງກັນ
ແລະກັນ ແລະຕົກໄປໃນພະຫັດຂອງກະສັດຂອງພວກເຂົາ ພວກເຂົາຈະບີບບັງຄັບຢຽບຢ່ຳ
ແຜ່ນດິນນີ້ ແລະເຮົາຈະບໍ່ຊ່ວຍເຫລືອຄົນໜຶ່ງຄົນໃດໃຫ້ພົ້ນຈາກມືຂອງພວກເຂົາເລີຍ"

[7]ດັ່ງນັ້ນ ຂ້າພະເຈົ້າຈຶ່ງໄດ້ລ້ຽງຝູງສັດສຳລັບຂ້າ ເພື່ອເຫັນແກ່ຜູ້ທີ່ຄ້າຝູງແກະ ຂ້າພະເຈົ້າໄດ້
ເອົາໄມ້ເທົ້າສອງອັນ ອັນໜຶ່ງໃຫ້ຊື່ວ່າ ພຣະຄຸນ ອີກອັນໜຶ່ງ ຂ້າພະເຈົ້າໃຫ້ຊື່ວ່າ ເຄື່ອງມັດຈຳ
ຫລືສະຫະພາບ ແລະຂ້າພະເຈົ້າກໍລ້ຽງດູຝູງແກະນັ້ນ
[8]ຂ້າພະເຈົ້າໄດ້ທຳລາຍຜູ້ລ້ຽງແກະສາມຄົນ
ໃນເດືອນດຽວແລະຈິດໃຈຂ້າພະເຈົ້າກໍເບື່ອໜ່າຍແກະເຫລົ່ານັ້ນ ແລະຈິດໃຈຂອງແກະນັ້ນກໍກຽດ
ຊັງຂ້າພະເຈົ້າເໝືອນກັນ
[9]ຂ້າພະເຈົ້າໄດ້ບອກວ່າ "ເຮົາຈະບໍ່ລ້ຽງພວກເຈົ້າ ສິ່ງທີ່ຈະຕ້ອງຕາຍກໍ
ຈົ່ງຕາຍໄປ ແລະສິ່ງທີ່ຈະຕ້ອງຈິບຫາຍກໍຈົ່ງຈິບຫາຍໄປ ແລະບັນດາຜູ້ທີ່ເຫລືອຢູ່ນັ້ນໃຫ້ພວກ
ເຂົາກິນກັນແລະກັນ"
[10]ຂ້າພະເຈົ້າກໍເອົາໄມ້ເທົ້າທີ່ຊື່ ພຣະຄຸນນັ້ນມາຫັກ ເພື່ອລົ້ມເລີກຄຳໝັ້ນ-
ສັນຍາ ຊຶ່ງຂ້າພະເຈົ້າໄດ້ສັນຍາໄວ້ກັບຊົນຊາດທັງຫລາຍ
[11]ຄຳສັນຍາໄດ້ຍົກເລີກໃນວັນນັ້ນ
ແລະບັນດານັກຄ້າແກະນັ້ນ ທີ່ໄດ້ເອົາໃຈໃສ່ຟັງເຮົາກໍໄດ້ຮູ້ຈັກວ່າ ນັ້ນເປັນພຣະທຳຂອງພຣະຜູ້-
ເປັນເຈົ້າ

[12]ແລ້ວຂ້າພະເຈົ້າໄດ້ບອກພວກເຂົາວ່າ "ຖ້າພວກທ່ານເຫັນດີ ຈົ່ງເອົາຄ່າຈ້າງໃຫ້ແກ່ເຮົາເທີ້ນ
ຖ້າບໍ່ເຫັນດີກໍບໍ່ຕ້ອງເສຍ" ແລ້ວພວກເຂົາກໍໄດ້ຊັ່ງເງິນເປັນຄ່າຈ້າງເຮົາສາມສິບຫລຽນ
[13]ແລ້ວ
ພຣະຜູ້ເປັນເຈົ້າໄດ້ບອກຂ້າພະເຈົ້າວ່າ "ລາຄາອັນປະເສີດທີ່ພວກເຂົາໄດ້ຄາດໝາຍເຮົານັ້ນ ຈົ່ງ

ໂຍນເງິນນັ້ນໃຫ້ແກ່ຊ່າງປັ້ນໝໍ້ສາ” ດັ່ງນັ້ນ ຂ້າພະເຈົ້າຈຶ່ງເອົາເງິນສາມສິບຫລຽນໂຍນໃຫ້ແກ່
ຊ່າງປັ້ນໝໍ້ໃນພຣະວິຫານຂອງ ພຣະຜູ້ເປັນເຈົ້າ [14]ແລ້ວຂ້າພະເຈົ້າກໍຫັກໄມ້ເທົ້າອັນທີສອງທີ່ຊື່
ວ່າເຄື່ອງມັດຈຳນັ້ນ ເພື່ອເຮັດໃຫ້ຢູດາ ແລະອິສຣາເອນຢ່າໄດ້ເປັນພີ່ນ້ອງກັນ
[15]ແລ້ວ ພຣະຜູ້ເປັນເຈົ້າໄດ້ບອກຂ້າພະເຈົ້າວ່າ “ຈົ່ງຈັບເຄື່ອງໃຊ້ຂອງຜູ້ລ້ຽງແກະໂງ່ຈ້າຂຶ້ນມາ
[16]ເພາະເບິ່ງແມ ເຮົາຈະຕັ້ງຜູ້ລ້ຽງແກະຜູ້ໜຶ່ງໃນແຜ່ນດິນນີ້ ລາວຈະບໍ່ໄປຢ້ຽມຢາມສັດທີ່ກຳລັງ
ຈະຕາຍ ລາວຈະບໍ່ຊອກຫາສັດທີ່ກະຈັດກະຈາຍໄປ, ລາວຈະບໍ່ພັນບາດໂຕແກະທີ່ເປັນບາດ
ແລະຈະບໍ່ລ້ຽງສັດທີ່ຢູ່ດີສະບາຍແຕ່ລາວຈະກິນເນື້ອຂອງແກະອ້ວນພີທຸກໂຕ ແລະຫັກເລັບຕີນ
ຂອງແກະນັ້ນ
[17]ວິບັດແກ່ຜູ້ລ້ຽງແກະທີ່ອັບປະໂຫຍດ ຜູ້ທີ່ປະຖິ້ມຝູງແກະ ດາບຈະຟັນແຂນ ແລະຕາຂວາ
ຂອງລາວ ແຂນນັ້ນຈະລີບໄປ ແລະຕາເບື້ອງຂວາຂອງລາວກໍຈະບອດໄປ”

# ບົດທີ 12

## ການຊ່ວຍກູ້ເອົາເຢຣູຊາເລັມໃນອະນາຄົດ

[1]ພຣະໂອວາດແຫ່ງພຣະທຳຂອງ ພຣະຜູ້ເປັນເຈົ້າ ສຳລັບ ອິສຣາເອນ ພຣະຜູ້ເປັນເຈົ້າ ຜູ້ຂຶງ
ທ້ອງຟ້າອອກ ແລະວາງຮາກຖານໂລກ ແລະປັ້ນຈິດວິນຍານໃຫ້ມີຢູ່ໃນມະນຸດ ພຣະອົງກ່າວ
ດັ່ງນີ້ວ່າ
[2]“ເບິ່ງແມ ເຮົາຈະເຮັດໃຫ້ເມືອງ ເຢຣູຊາເລັມ ເປັນຈອກແຫ່ງຄວາມມຶນເມົາສຳລັບບັນດາຊົນ
ຊາດທັງຫລາຍທີ່ຢູ່ອ້ອມຮອບ ແລະຈອກນັ້ນຈະເປັນທີ່ຕໍ່ສູ້ຢູດາເໝືອນກັນ ເມື່ອ ເຢຣູຊາເລັມ
ຖືກປິດອ້ອມໄວ້ [3]ໃນວັນນັ້ນ ເຮົາຈະເຮັດໃຫ້ ເຢຣູຊາເລັມ ເປັນຫີນໜັກແກ່ບັນດາຊົນຊາດທັງ-
ຫລາຍ ຄົນທັງຫລາຍຜູ້ທີ່ພະຍາຍາມຍົກຫີນນັ້ນຂຶ້ນຈະເຮັດໃຫ້ຕົວເອງບາດເຈັບຢ່າງສາຫັດ
ແລະພວກຕ່າງຊາດຈາກທຸກມຸມໂລກຈະໂຮມກັນຕໍ່ສູ້ເມືອງນັ້ນ [4]ພຣະຜູ້ເປັນເຈົ້າກ່າວວ່າ “ໃນ
ວັນນັ້ນ ເຮົາຈະໃຫ້ມ້າທຸກໂຕແຕກຕື່ນ ແລະເຮັດໃຫ້ຄົນຂີ່ມ້າເປັນບ້າປ່ວງໄປ ເຮົາຈະມືນຕາເບິ່ງ
ເຊື້ອສາຍ ຢູດາ ແລະເຮົາຈະຕີມ້າທຸກໂຕຂອງຊົນຊາດທັງຫລາຍຕາບອດໄປ [5]ແລ້ວພວກເຈົ້າ
ນາຍຂອງຢູດາຈະຄິດໃນໃຈວ່າ ‘ຊາວ ເຢຣູຊາເລັມ ຈະເປັນກຳລັງຂອງເຮົາ ເນື່ອງດ້ວຍ ພຣະຜູ້-
ເປັນເຈົ້າ ແຫ່ງຈັກກະວານ ພຣະເຈົ້າຂອງພວກເຂົາ’ [6]ໃນວັນນັ້ນ ເຮົາຈະເຮັດໃຫ້ພວກຫົວໜ້າ
ຂອງຄົນຢູດາເປັນຄືໄຟທີ່ຢູ່ທ່າມກາງກອງຟືນ ເໝືອນດັ່ງກະບອງໄຕ້ຢູ່ທ່າມກາງຟ່ອນເຂົ້າ ແລະ
ພວກເຂົາຈະເຜົາຜານບັນດາຊົນຊາດທັງຫລາຍທີ່ຢູ່ອ້ອມຮອບນັ້ນໄປທາງເບື້ອງຂວາ ແລະໄປ
ທາງເບື້ອງຊ້າຍ ແລະ ເຢຣູຊາເລັມ ຈະຍັງມີຄົນອາໃສຢູ່ບ່ອນເກົ່າຄືເມືອງ ເຢຣູຊາເລັມ [7]ແລະ
ພຣະຜູ້ເປັນເຈົ້າຈະປະທານໄຊຊະນະແກ່ເຕັນທັງຫລາຍຂອງຢູດາກ່ອນ ເພື່ອວ່າສະຫງ່າລາສີ
ຂອງເຊື້ອສາຍ ດາວິດ ແລະສະຫງ່າລາສີຂອງຊາວເມືອງ ເຢຣູຊາເລັມ ຈະບໍ່ຍົກຍ້ອງຕົວຂຶ້ນຕໍ່ສູ້
ຢູດາ [8]ໃນວັນນັ້ນ ພຣະຜູ້ເປັນເຈົ້າຈະປົກປ້ອງຊາວເມືອງ ເຢຣູຊາເລັມ ແລະຊາວເມືອງທຸກຄົນທີ່
ສະດຸດໃຈກໍຈະເປັນເໝືອນ ດາວິດ ແລະຄອບຄົວຂອງ ດາວິດ ຈະເປັນເໝືອນທູດສະຫວັນຂອງ
ພຣະຜູ້ເປັນເຈົ້ານຳໜ້າພວກເຂົາ [9]ຕໍ່ມາໃນວັນນັ້ນ ເຮົາຈະຊອກຫາເພື່ອຈະທຳລາຍພວກຕ່າງ

ຊາດທັງໝົດທີ່ມາຕໍ່ສູ້ ເຢຣູຊາເລັມ
[10]ແລະ ເຮົາຈະຖອກວິນຍານ ແຫ່ງພຣະຄຸນ ແລະຄຳອ້ອນວອນ ເທິງ ເຊື້ອສາຍ ດາວິດ ແລະ
ຊາວ ເຢຣູຊາເລັມ ຈະ ເຫັນເຮົາຜູ້ຊຶ່ງຕົນເອງໄດ້ແທງ ແລ້ວພວກເຂົາຈຶ່ງຈະໄວ້ທຸກເພື່ອເພິ່ນເໝືອນ
ກັບຄົນທີ່ໄວ້ທຸກໃຫ້ແກ່ລູກຊາຍຄົນດຽວຂອງຕົນ ແລະຈະຮ້ອງໄຫ້ຢ່າງຂົມຂື່ນຍ້ອນພຣະອົງ
ເໝືອນດັ່ງຄົນທີ່ຮ້ອງໄຫ້ດ້ວຍຄວາມຂົມຂື່ນໃຈຍ້ອນລູກກົກຂອງຕົນ [11]ໃນວັນນັ້ນ ການໄວ້ທຸກ
ໃນ ເຢຣູຊາເລັມ ຈະ ເປັນ ເໝືອນກັບການໄວ້ທຸກອັນໃຫຍ່ຫລວງ ເພື່ອ ຮາດັດຣິມໂມນ ທີ່ທົ່ງພຽງ ເມ-
ກິດໂດ [12]ແຜ່ນດິນຈະໄວ້ທຸກຕາມແຕ່ລະຄອບຄົວ ເຊັ່ນຄອບຄົວ ດາວິດ ຕ່າງຫາກ ແລະບັນດາ
ເມຍຂອງເພິ່ນຕ່າງຫາກ ບັນດາຄົນຄອບຄົວຂອງ ນາທານ ຕ່າງຫາກ ແລະບັນດາເມຍຂອງພວກ
ເຂົາຕ່າງຫາກ [13]ຄົນທັງຫລາຍຈາກເຊື້ອສາຍ ເລວີ ຕ່າງຫາກ ແລະເມຍຂອງພວກເຂົາຕ່າງຫາກ
ຄອບຄົວ ຊີເມອີ ຕ່າງຫາກ ແລະເມຍຂອງພວກເຂົາຕ່າງຫາກ [14]ທຸກຄອບຄົວທີ່ເຫລືອຢູ່ກໍໄວ້ທຸກ
ຕ່າງຫາກ ແລະເມຍຂອງພວກເຂົາຕ່າງຫາກ”

# ບົດທີ 13

[1]“ໃນວັນນັ້ນ ຈະມີນ້ຳພຸພຸ່ງຂຶ້ນສຳລັບຄອບຄົວຂອງ ດາວິດ ແລະຊາວ ເຢຣູຊາເລັມ ເພື່ອຈະ
ຊຳລະພວກເຂົາໃຫ້ພົ້ນຈາກຄວາມບາບ ແລະຄວາມຊົ່ວຮ້າຍ

## ການໄຫວ້ຮູບເຄົາລົບຖືກຈຳກັດ ຄົນຖ່ອມຕົວເປັນຜູ້ທີ່ພຣະເຈົ້າຊົງພໍພຣະໄທ

[2]ພຣະຜູ້ເປັນເຈົ້າ ແຫ່ງ ຈັກກະວານກ່າວວ່າ “ຕໍ່ມາໃນວັນນັ້ນ ເຮົາຈະຕັດຊື່ຂອງບັນດາຮູບ
ເຄົາລົບໃຫ້ໜີຈາກແຜ່ນດິນ ແລະພວກເຂົາຈະບໍ່ຈື່ຈຳຊື່ນັ້ນອີກຕໍ່ໄປ ເຮົາຈະໄລ່ຜູ້ປະກາດພຣະ-
ທຳ ແລະວິນຍານທີ່ຊົ່ວຮ້າຍອອກໄປຈາກແຜ່ນດິນ [3]ຕໍ່ມາ ຖ້າມີຜູ້ໜຶ່ງຜູ້ໃດທຳນວາຍຢູ່ ພໍ່ແມ່ຜູ້
ໃຫ້ກຳເນີດຈະບອກລາວວ່າ ‘ເຈົ້າຈະບໍ່ມີຊີວິດຢູ່ເພາະ ເຈົ້າເວົ້າຂີ້ຕົວະ ໃນພຣະນາມຂອງ ພຣະຜູ້-
ເປັນເຈົ້າ’ ພໍ່ແມ່ຜູ້ໃຫ້ກຳເນີດລາວມາຈະແທງລາວໃຫ້ຊອດຖ້າລາວທຳນວາຍຢ່າງນັ້ນ [4]ຕໍ່ມາໃນ
ວັນນັ້ນ ພວກຜູ້ທຳນວາຍທຸກຄົນຈະມີຄວາມອັບອາຍ ເພາະນິມິດຂອງເຂົາເອງ ເມື່ອພວກເຂົາ
ທຳນວາຍ ພວກເຂົາຈະບໍ່ນຸ່ງເສື້ອຊັ້ນນອກທີ່ເປັນຂົນສັດ [5]ແຕ່ພວກເຂົາຈະເວົ້າວ່າ ‘ຂ້າພະເຈົ້າບໍ່
ແມ່ນຜູ້ທຳນວາຍ ຂ້າພະເຈົ້າເປັນຊາວນາ ເພາະວ່າເຂົາໄດ້ຊື້ຂ້າພະເຈົ້າມາເປັນທາດຕັ້ງແຕ່ຍັງ
ໜຸ່ມໆ [6]ແລ້ວພວກເຂົາຈະຖາມເພິ່ນວ່າ ‘ເປັນຫຍັງມືຂອງທ່ານຈຶ່ງເປັນບາດ’ ເພິ່ນຕອບວ່າ ‘ຂ້າ-
ພະເຈົ້າໄດ້ເປັນບາດໃນເຮືອນຂອງພວກເພື່ອນຂອງຂ້າພະເຈົ້າ’”
[7]ພຣະຜູ້ເປັນເຈົ້າ ແຫ່ງ ຈັກກະວານກ່າວວ່າ “ດາບເອີຍ ຈົ່ງຕື່ນຂຶ້ນຕໍ່ສູ້ພວກຜູ້ລ້ຽງ ແກະຂອງ
ເຮົາຈົ່ງຕໍ່ສູ້ຜູ້ທີ່ເປັນເພື່ອນມິດຂອງເຮົາ ຈົ່ງຕີຜູ້ລ້ຽງແກະ ແລະຝູງແກະນັ້ນຈະກະຈັດກະຈາຍໄປ
ເຮົາຈະກຳມືຂອງເຮົາເທິງບັນດາແກະໂຕນ້ອຍໆ”

## ອິສຣາເອນຈະຮັບໂທດ ພວກກະບົດຈະຖືກລ້າງຜານຖິ້ມ

[8]ພຣະຜູ້ເປັນເຈົ້າ ກ່າວວ່າ ຢູ່ມາທົ່ວທັງ ແຜ່ນດິນນີ້ຈະຕ້ອງຈິບຫາຍພິນາດໄປສອງສ່ວນ ແຕ່
ໜຶ່ງສ່ວນສາມຈະຍັງ ເຫລືອຢູ່ [9]ເຮົາຈະເອົາໜຶ່ງສ່ວນສາມນີ້ໃສ່ໃນໄຟ ແລະຈະຊຳລະພວກເຂົາ
ເໝືອນຫລອມເງິນ ແລະເຮົາຈະລອງ ເບິ່ງພວກເຂົາ ເໝືອນລອງ ເບິ່ງຄຳ ພວກເຂົາຈະຮ້ອງທູນ

ອອກນາມຂອງເຮົາ ແລະເຮົາຈະຕອບພວກເຂົາ ເຮົາຈະກ່າວວ່າ 'ພວກນີ້ແມ່ນຊົນຊາດຂອງ
ເຮົາ' ແລະພວກເຂົາຈະກ່າວວ່າ 'ພຣະຜູ້ເປັນເຈົ້າຄືພຣະເຈົ້າຂອງຂ້າພະເຈົ້າ'"

# ບົດທີ 14

1ເບິ່ງແມ ມີວັນໜຶ່ງທີ່ຈະມາສຳລັບ ພຣະຜູ້ເປັນເຈົ້າ ແລະຊັບສິນຂອງເຈົ້ານັ້ນ ພວກເຂົາຈະ
ແບ່ງກັນໃນທ່າມກາງເຈົ້າ 2ເພາະເຮົາຈະຮວບຮວມພວກຕ່າງຊາດໃຫ້ເຮັດສົງຄາມຕໍ່ສູ້ກັບ ເຢຣູ-
ຊາເລັມ ແລະພວກເຂົາຈະຍຶດເມືອງນັ້ນ ແລະປຸ້ນເອົາຊັບໃນເຮືອນໄປ ທັງຂົ່ມຂືນບັນດາຜູ້ຍິງ
ພົນລະເມືອງເຄິ່ງໜຶ່ງຈະໄປເປັນທາດປະຊາຊົນສ່ວນທີ່ເຫລືອຢູ່ຈະບໍ່ຖືກຕັດອອກໄປຈາກເມືອງ
3ແລ້ວ ພຣະຜູ້ເປັນເຈົ້າ ຈະສະເດັດອອກໄປຕໍ່ສູ້ກັບປະຊາຊາດ ເຫລົ່ານັ້ນ ເໝືອນດັ່ງໃນມື້ທີ່
ພຣະອົງຕໍ່ສູ້ໃນວັນສົງຄາມ 4ໃນມື້ນັ້ນ ພຣະບາດຂອງພຣະອົງຈະຢືນຢູ່ທີ່ພູເຂົາໝາກກອກເທດ
ຊຶ່ງຢູ່ຕໍ່ໜ້າເມືອງ ເຢຣູຊາເລັມ ທາງທິດຕາເວັນອອກ ແລະພູເຂົາໝາກກອກເທດນັ້ນຈະແຕກແຍງ
ຢູ່ເຄິ່ງກາງ ແຍກອອກເປັນສອງສ່ວນຈາກທິດຕາເວັນອອກ ແລະທິດຕາເວັນຕົກ ຊຶ່ງເປັນຮ່ອມທີ່
ກວ້າງໃຫຍ່ຫລາຍ ຮ່ອມນັ້ນຈະແຍກຢູ່ເຄິ່ງກາງ ພູເຂົາເຄິ່ງໜຶ່ງຈະແຍກໄປທາງເໜືອ ແລະອີກ
ເຄິ່ງໜຶ່ງຈະ ແຍກໄປທາງໃຕ້ 5ແລະທ່ານທັງຫລາຍຈະໜີໄປໃນຮ່ອມພູເຂົາທັງສອງຂອງເຮົາ
ເພາະວ່າຮ່ອມກາງພູເຂົາຈະໄປເຖິງ ອາເຊນ ແລະທ່ານທັງຫລາຍຈະຕ້ອງຫລົບໜີໄປ ເໝືອນ
ກັບທີ່ໄດ້ປົບໜີເມື່ອເກີດແຜ່ນດິນໄຫວໃນສະໄໝ ອຸດຊີຢາ ກະສັດແຫ່ງ ຢູດາ ແລ້ວ ພຣະຜູ້ເປັນ-
ເຈົ້າ ພຣະເຈົ້າ ຂອງຂ້າພະເຈົ້າຈະສະເດັດມາພ້ອມກັບພວກຜູ້ບໍລິສຸດທັງຫລາຍ ຊຶ່ງຈະມາພ້ອມ
ກັນກັບພຣະອົງ 6ຕໍ່ມາໃນວັນນັ້ນ ຈະບໍ່ມີແສງສະຫວ່າງ ດວງສະຫວ່າງທັງຫລາຍຈະມືດມົວໄປ
7ແຕ່ຈະເປັນວັນໜຶ່ງທີ່ ພຣະຜູ້ເປັນເຈົ້າຊົງຮູ້ຈັກແລ້ວ ບໍ່ແມ່ນກາງເວັນ ຫຼືກາງຄືນ ແຕ່ເມື່ອຄໍ່າມາ
ຈະມີແສງສະຫວ່າງ 8ໃນວັນນັ້ນ ນໍ້າແຫ່ງຊີວິດຈະໄຫລອອກຈາກ ເຢຣູຊາເລັມ ຊຶ່ງເຄິ່ງໜຶ່ງໄຫລ
ໄປສູ່ນໍ້າທະເລທິດຕາເວັນອອກ ແລະອີກເຄິ່ງໜຶ່ງໄຫລໄປສູ່ທະເລທິດຕາເວັນຕົກ ນໍ້ານັ້ນຈະ
ໄຫລໃນລະດູຮ້ອນ ແລະໃນລະດູໜາວ

9ພຣະຜູ້ເປັນເຈົ້າ ຈະເປັນພຣະມະຫາກະສັດເທິງແຜ່ນດິນໂລກ ໃນວັນນັ້ນ ພຣະຜູ້ເປັນເຈົ້າ
ຈະເປັນ ພຣະເຈົ້າອົງດຽວ ແລະມີພຣະນາມດຽວ 10ແຜ່ນດິນທັງໝົດຈາກ ເກບາ ຈົນຮອດທິດໃຕ້
ຣິມໂມນ ຈາກ ເຢຣູຊາເລັມ ຈະກາຍເປັນທົ່ງຮາບພຽງ ແຕ່ ເຢຣູຊາເລັມ ຢູ່ສູງເດັ່ນ ແລະຢູ່ບ່ອນ
ເກົ່າຕັ້ງແຕ່ປະຕູ ເບັນຢາມິນ ຈົນຮອດປະຕູເກົ່າ ປະຕູມຸມ ແລະຈາກຫໍຄອຍ ຮານາເນນ ເຖິງ
ບ່ອນບີບນໍ້າອະງຸ່ນຂອງກະສັດ 11ຈະມີຜູ້ຄົນອາໄສຢູ່ໃນເມືອງເປັນຈຳນວນຫລວງຫລາຍ ແລະບໍ່
ມີຄຳສາບແຊ່ງຕໍ່ໄປ; ເຢຣູຊາເລັມ ຈະຢູ່ຢ່າງປອດໄພ

12ບັນດາຊົນຊາດທັງຫລາຍທີ່ຈະເຮັດສົງຄາມຕໍ່ສູ້ກັບ ເມືອງ ເຢຣູຊາເລັມ ນັ້ນ ພຣະຜູ້ເປັນເຈົ້າ
ຈະໂຈມຕີພວກເຂົາດ້ວຍໄພພິບັດ ຄືເນື້ອໜັງຂອງພວກເຂົາຈະເນົ່າເປື່ອຍໄປທັງຢືນ ຕາຂອງ
ພວກເຂົາຈະເນົ່າເປື່ອຍໃນເບົ້າຕາ ແລະລີ້ນຂອງພວກເຂົາຈະເປື່ອຍເນົ່າໃນປາກ 13ຕໍ່ມາໃນວັນ
ນັ້ນ ການສັບສົນວຸ້ນວາຍຢ່າງໃຫຍ່ຫລວງຈາກ ພຣະຜູ້ເປັນເຈົ້າ ຈະຕົກລົງທ່າມກາງພວກເຂົາ
ເພາະສະນັ້ນ ຄົນໜຶ່ງຈະຈັບກຸມເພື່ອນບ້ານຂອງຕົນ ແລະພວກເຂົາຈະຍົກມືຂຶ້ນຕໍ່ສູ້ກັນແລະກັນ

[14]ເຖິງແມ່ນວ່າ ຢູດາຈະຕໍ່ສູ້ກັນໃນເມືອງເຢຣູຊາເລັມ ພວກເຂົາຈະໂຮມເອົາຊັບສົມບັດເງິນຄຳ
ແລະເສື້ອຜ້າຫລວງຫລາຍຂອງປະຊາຊາດທັງໝົດທີ່ຢູ່ອ້ອມຮອບນັ້ນ [15]ແລະໄພພິບັດຢ່າງນີ້ຈະ
ຕົກຖືກ ມ້າ, ລໍ, ອູດ, ລາ ແລະສັດທຸກຊະນິດທີ່ຢູ່ໃນເຕັນເຫລົ່ານັ້ນ

[16]ແລະຕໍ່ມາ ບັນດາຄົນທີ່ເຫລືອຢູ່ໃນປະຊາຊາດທັງປວງທີ່ຈະຂຶ້ນມາສູ້ຮົບກັບເຢຣູຊາເລັມ ກໍ
ຈະຂຶ້ນມາທຸກໆປີ ເພື່ອຈະຂາບໄຫວ້ຕໍ່ໜ້າກະສັດຄືພຣະຜູ້ເປັນເຈົ້າແຫ່ງຈັກກະວານ ແລະຈະຖື
ເທດສະການຢູ່ຕູບ [17]ຖ້າຄອບຄົວໃດໃນພື້ນແຜ່ນດິນໂລກບໍ່ຂຶ້ນໄປເຢຣູຊາເລັມເພື່ອຂາບໄຫວ້
ນະມັດສະການຕໍ່ໜ້າພຣະມະຫາກະສັດ ຄືພຣະຜູ້ເປັນເຈົ້າແຫ່ງຈັກກະວານ ຝົນຈະບໍ່ຕົກໃສ່
ຄອບຄົວນັ້ນ [18]ແລະຖ້າຄອບຄົວຂອງເອຢິບບໍ່ຂຶ້ນໄປ ຫລືບໍ່ມາ ຝົນຈະບໍ່ຕົກເທິງພວກເຂົາ ອັນ
ນີ້ເປັນໄພພິບັດຊຶ່ງພຣະຜູ້ເປັນເຈົ້າໃຊ້ໂຈມຕີປະຊາຊາດອື່ນໆທີ່ບໍ່ຂຶ້ນໄປຖືເທດສະການຢູ່ຕູບ
[19]ສິ່ງນີ້ຈະເປັນໂທດບາບຂອງເອຢິບ ແລະເປັນການລົງໂທດປະຊາຊາດທັງໝົດ ທີ່ບໍ່ຂຶ້ນໄປຖື
ເທດສະການຢູ່ຕູບ

[20]ແລະໃນວັນນັ້ນ ໝາກກະດິ່ງທີ່ຜູກມ້າຈະມີຄຳຈາລຶກວ່າ "ບໍລິສຸດສຳລັບພຣະຜູ້ເປັນເຈົ້າ"
ແລະບັນດາໝໍ້ໃຫຍ່ທີ່ຢູ່ໃນພຣະວິຫານຂອງພຣະຜູ້ເປັນເຈົ້າຈະເປັນເໝືອນຊາມທີ່ຢູ່ຕໍ່ໜ້າແທ່ນ
ບູຊາ [21]ແມ່ນແລ້ວ ໝໍ້ທຸກໜ່ວຍໃນເຢຣູຊາເລັມ ແລະຢູດາຈະເປັນສິ່ງທີ່ບໍລິສຸດສຳລັບພຣະຜູ້-
ເປັນເຈົ້າແຫ່ງຈັກກະວານ ເພື່ອວ່າທຸກຄົນທີ່ມາຖວາຍເຄື່ອງບູຊາຈະເອົາໝໍ້ໄປນຳ ແລະຈະຕົ້ມ
ຊີ້ນໃນໝໍ້ເຫລົ່ານັ້ນ ໃນວັນນັ້ນຈະບໍ່ມີຄົນການາອານໃນພຣະວິຫານຂອງພຣະຜູ້ເປັນເຈົ້າແຫ່ງ
ຈັກກະວານອີກຕໍ່ໄປ

* * *

# ມາລາກີ

## ບົດທີ 1

### ພຣະເຈົ້າຊົງຮັກອິສຣາເອນ

[1]ຕໍ່ໄປນີ້ ແມ່ນພຣະທຳຂອງ ພຣະຜູ້ເປັນເຈົ້າ ທີ່ໃຫ້ ມາລາກີ ບອກປະຊາຊົນ ອິສຣາເອນ ຄື.
[2]ພຣະຜູ້ເປັນເຈົ້າ ຊົງກ່າວວ່າ, "ເຮົາໄດ້ຮັກພວກເຈົ້າ ແຕ່ພວກເຈົ້າຊໍ້າຕອບວ່າ ພຣະອົງໄດ້ຮັກ
ພວກຂ້ານ້ອຍຢ່າງໃດ?" ພຣະຜູ້ເປັນເຈົ້າ ຊົງຕອບວ່າ, "ເອຊາວ ແລະ ຢາໂຄບ ເປັນອ້າຍນ້ອງ
ກັນ ແຕ່ເຮົາຮັກຢາໂຄບ ແລະເຊື້ອສາຍຂອງລາວ. [3]ແຕ່ເຮົາຊັງ ເອຊາວ ພ້ອມທັງເຊື້ອສາຍຂອງ
ລາວ ເຮົາໄດ້ທຳລາຍດິນແດນພູເຂົາຂອງ ເອຊາວ ແລະໃຫ້ດິນແດນນັ້ນເປັນຖິ່ນຂອງສັດປ່າ."
[4]ຖ້າຫາກຊາວ ເອໂດມ ເຊື້ອສາຍຂອງ ເອຊາວ ເວົ້າວ່າ, "ເມືອງຂອງພວກເຮົາຖືກທຳລາຍ ແຕ່
ພວກເຮົາຈະສ້າງມັນຂຶ້ນໃໝ່" ພຣະຜູ້ເປັນເຈົ້າ ແຫ່ງຈັກກະວານກໍຊົງຕອບວ່າ, "ປ່ອຍໃຫ້ພວກ
ເຂົາສ້າງຂຶ້ນໃໝ່ ເຮົາຈະທຳລາຍມັນລົງອີກ ປະຊາຊົນຈະເອີ້ນເມືອງນັ້ນວ່າ ເປັນເມືອງເຄາະ
ຮ້າຍ ແລະເປັນຊົນຊາດທີ່ ພຣະຜູ້ເປັນເຈົ້າ ຊົງພຣະພິໂລດຢູ່ສືບໆ ໄປ. [5]ພວກເຈົ້າຈະເຫັນສິ່ງ
ເຫລົ່ານັ້ນ ດ້ວຍຕາຂອງພວກເຈົ້າເອງ ແລະພວກເຈົ້າຈະເວົ້າວ່າ ພຣະຜູ້ເປັນເຈົ້າ ຊົງຍິ່ງໃຫຍ່
ເຖິງແມ່ນຈະຢູ່ນອກເຂດແດນຂອງ ອິສຣາເອນ ກໍຕາມ."

### ພຣະຜູ້ເປັນເຈົ້າຊົງຂະໜາບພວກປະໂລຫິດ

[6]ພຣະຜູ້ເປັນເຈົ້າ ແຫ່ງຈັກກະວານ ຊົງກ່າວກັບພວກປະໂລຫິດວ່າ, "ລູກຍ່ອມນັບຖືພໍ່ແມ່ແຫ່ງ
ຕົນ ແລະຄົນໃຊ້ຍ່ອມນັບຖືນາຍແຫ່ງຕົນ ເຮົາເປັນພໍ່ຂອງເຈົ້າ ເປັນຫຍັງເຈົ້າຈຶ່ງບໍ່ນັບຖືເຮົາ?
ເຮົາກໍເປັນນາຍຂອງເຈົ້າ ເປັນຫຍັງເຈົ້າຈຶ່ງບໍ່ຢຳເກງເຮົາ? ເຈົ້າໝິ່ນປະໝາດເຮົາ ນອກຈາກນີ້
ເຈົ້າຍັງຖາມວ່າ ພວກຂ້ານ້ອຍໝິ່ນປະໝາດພຣະອົງຢ່າງໃດ? [7]ຢ່າງນີ້ແຫລະ ຄື ນຳເອົາອາ-
ຫານທີ່ມີມົນທິນມາຖວາຍເທິງແທ່ນບູຊາຂອງເຮົາ ແລ້ວກໍຖາມວ່າ ພວກຂ້ານ້ອຍໃຫ້ຄວາມນັບຖື
ແດ່ພຣະອົງຫລຸດນ້ອຍລົງຢ່າງໃດ? ເຮົາຈະບອກພວກເຈົ້າຄືວ່າ ເຈົ້າບໍ່ໄດ້ເຄົາລົບນັບຖືແທ່ນບູ-
ຊາຂອງເຮົາເລີຍ. [8]ເມື່ອເຈົ້ານຳສັດຕາບອດ ສັດເສຍຂາ ຫລືສັດເປັນພະຍາດມາຖວາຍແກ່ເຮົາ
ເຈົ້າຄິດວ່າເປັນການຖືກຕ້ອງແລ້ວຫລື? ຈົ່ງນຳສັດເຫລົ່ານັ້ນໄປໃຫ້ຜູ້ປົກຄອງຂອງເຈົ້າລອງເບິ່ງ
ດູ ເພິ່ນຈະພໍໃຈເຈົ້າ ຫລືໃຫ້ຄວາມດີຄວາມຊອບແກ່ເຈົ້າບໍ?"

[9]ພຣະຜູ້ເປັນເຈົ້າ ແຫ່ງຈັກກະວານຊົງກ່າວວ່າ, "ບັດນີ້ ພວກປະໂລຫິດເອີຍ ລອງອ້ອນວອນ
ທູນຂໍຕໍ່ ພຣະເຈົ້າ ໃຫ້ພຣະອົງຊົງກະລຸນາຕໍ່ພວກເຈົ້າເບິ່ງ ພຣະອົງຄົງຈະບໍ່ຕອບຄວາມອ້ອນ-
ວອນຂອງພວກເຈົ້າ ແລະຄົງຈະເປັນຍ້ອນຄວາມຜິດຂອງພວກເຈົ້າເອງ. [10]ເຮົາຢາກໃຫ້ມີຈັກຄົນ
ໜຶ່ງໃນພວກເຈົ້າອັດປະຕູພຣະວິຫານ ເພື່ອບໍ່ໃຫ້ພວກເຈົ້າໄຕ້ໄຟເທິງແທ່ນບູຊາຂອງເຮົາຢ່າງອັບ
ປະໂຫຍດ ເຮົາບໍ່ພໍໃຈພວກເຈົ້າ ແລະຈະບໍ່ຮັບເຄື່ອງບູຊາທີ່ພວກເຈົ້າໄດ້ນຳມາຖວາຍເຮົາ.
[11]ຊົນຊາດທົ່ວໂລກ ແຕ່ທິດຕາເວັນອອກຫາທິດຕາເວັນຕົກໃຫ້ກຽດແກ່ເຮົາ ໃນທຸກໆ ບ່ອນມີຄົນເຜົາ
ເຄື່ອງຫອມ ແລະເຄື່ອງບູຊາອັນບໍລິສຸດຖວາຍເຮົາ ຄົນທຸກຄົນກໍໃຫ້ກຽດເຮົາ. [12]ແຕ່ພວກເຈົ້າ

ໝິ່ນປະໝາດເຮົາ ເມື່ອເຈົ້າເວົ້າວ່າ ແທ່ນບູຊາຂອງເຮົາໜ້າຂີ້ດຽດ ແລະໝິ່ນປະໝາດອາຫານທີ່
ພວກເຈົ້າຖວາຍໃນທີ່ນັ້ນ. 13ພວກເຈົ້າເວົ້າວ່າ ຊ່າງອິດເມື່ອຍຕໍ່ການຖວາຍນີ້ແທ້ ແລະປິ່ນໜ້າໜີ
ຈາກເຮົາ ພວກເຈົ້ານຳສັດທີ່ລັກມາຖວາຍແກ່ເຮົາ ຫລືສັດເສຍຂາ ແລະເປັນພະຍາດ ເຈົ້າຄິດ
ວ່າ ເຮົາຈະຮັບບໍ? 14ຄຳສາບແຊ່ງຈະຕົກຖືກຄົນຂີ້ໂກງ ຜູ້ຊຶ່ງໄດ້ສັນຍາວ່າ ຈະຖວາຍສິ່ງທີ່ດີໃຫ້
ແກ່ເຮົາ ແຕ່ແລ້ວ ເຂົາໄດ້ນຳເອົາສັດທີ່ມີມົນທິນມາເຜົາຖວາຍບູຊາແກ່ເຮົາ ໃນເມື່ອສັດໂຕດີໆ
ຂອງເຂົາກໍຍັງມີເຕັມຢູ່ ເຮົາເປັນພຣະມະຫາກະສັດ ປະຊາຊົນທຸກຊົນຊາດຈຶ່ງຢຳເກງເຮົາ”
ພຣະເຈົ້າ ແຫ່ງຈັກກະວານໄດ້ຊົງກ່າວດັ່ງນີ້.

# ບົດທີ 2

1ພຣະຜູ້ເປັນເຈົ້າ ແຫ່ງຈັກກະວານຊົງກ່າວວ່າ, “ບັດນີ້ ປະໂລຫິດທັງຫລາຍເອີຍ ຕໍ່ໄປນີ້ຄືຄຳ
ສັ່ງສຳລັບພວກເຈົ້າ. 2ເຈົ້າຕ້ອງຍົກຍໍໃຫ້ກຽດເຮົາດ້ວຍສິ່ງທີ່ເຈົ້າກະທຳ” ພຣະອົງຊົງກ່າວຕໍ່ໄປ
ອີກວ່າ, “ຫາກພວກເຈົ້າບໍ່ຟັງໃນສິ່ງທີ່ເຮົາເວົ້າ ແລະບໍ່ໃສ່ໃຈໃນສິ່ງນັ້ນຢ່າງຈິງຈັງ ເຮົາກໍຈະນຳ
ຄວາມສາບແຊ່ງມາສູ່ພວກເຈົ້າ ເຮົາຈະນຳເອົາຄວາມສາບແຊ່ງມາໃສ່ໃນພອນດີທີ່ພວກເຈົ້າໄດ້ຮັບ
ໃນຖານະເປັນປະໂລຫິດ ອັນທີ່ຈິງ ຄວາມສາບແຊ່ງນັ້ນໄດ້ຕົກມາໃສ່ພວກເຈົ້າແລ້ວ ກໍຍ້ອນວ່າ
ພວກເຈົ້າບໍ່ໄດ້ເອົາຈິດໃສ່ໃຈຊາໃນຄຳສັ່ງຂອງເຮົາຢ່າງຈິງຈັງ. 3ເຮົາຈະຂະໜາບລູກຂອງພວກ
ເຈົ້າ ແລະເອົາໜ້າຂອງພວກເຈົ້າຖູໃສ່ເຄື່ອງໃນສັດ ທີ່ເອົາມາເຜົາຖວາຍບູຊາແລະເຮົາກໍຈະໂຍນ
ພວກເຈົ້າອອກໄປກັບເຄື່ອງບູຊານັ້ນ. 4ພວກເຈົ້າຈະໄດ້ຮູ້ວ່າເຮົາໄດ້ໃຫ້ຄຳສັ່ງນີ້ແກ່ພວກເຈົ້າ
ເພື່ອວ່າຄຳໝັ້ນສັນຍາຂອງເຮົາທີ່ເຮັດໄວ້ກັບພວກປະໂລຫິດ ຄືເຊື້ອສາຍຂອງເລວີນັ້ນຈະຄົງຢູ່.”
5ໃນຄຳໝັ້ນສັນຍາຂອງເຮົານັ້ນ ເຮົາໄດ້ສັນຍາວ່າ ຈະໃຫ້ຊີວິດ ແລະການຢູ່ດີກິນດີແກ່ພວກເຂົາ
ເຮົາໄດ້ໃຫ້ສິ່ງທັງປວງນີ້ ເພື່ອໃຫ້ພວກເຂົານັບຖືເຮົາ. 6ພວກເຂົາກໍໄດ້ນັບຖື ແລະຢຳເກງເຮົາ
ພວກເຂົາໄດ້ສອນສິ່ງທີ່ຖືກຕ້ອງ ແລະບໍ່ໄດ້ສອນສິ່ງທີ່ຜິດ ພວກເຂົາໄດ້ເດີນໄປກັບເຮົາຢ່າງຜາ
ສຸກ ພວກເຂົາໄດ້ກະທຳສິ່ງທີ່ຖືກ ແລະໄດ້ຊ່ອຍຫລາຍຄົນໃຫ້ຫັນໜີຈາກການເຮັດຊົ່ວ. 7ແມ່ນ
ໜ້າທີ່ຂອງປະໂລຫິດທີ່ຈະສອນຄວາມຈິງຂອງພຣະເຈົ້າ ມະນຸດຈະໄປຫາເຂົາ ເພື່ອຮຽນຮູ້
ຄວາມປະສົງຂອງເຮົາ ເພາະວ່າເຂົາເປັນຜູ້ສົ່ງຂ່າວຂອງພຣະຜູ້ເປັນເຈົ້າ ແຫ່ງຈັກກະວານ. 8ແຕ່
ພວກເຈົ້າໄດ້ອວ່າຍໜ້າໜີຈາກທາງທີ່ຊອບທຳ ຄຳສອນຂອງພວກເຈົ້າໄດ້ພາໃຫ້ຫລາຍຄົນເຮັດ
ຜິດ ເຈົ້າໄດ້ລະເມີດຄຳໝັ້ນສັນຍາທີ່ໄດ້ກະທຳໄວ້ກັບເຈົ້າ. 9ສະນັ້ນ ໃນເທື່ອນີ້ ເຮົາຈະເຮັດໃຫ້
ປະຊາຊົນອິສຣາເອນໝິ່ນປະໝາດພວກເຈົ້າ ເພາະວ່າພວກເຈົ້າບໍ່ໄດ້ປະຕິບັດຕາມຄຳສັ່ງສອນ
ຂອງເຮົາ ແລະເມື່ອພວກເຈົ້າສອນກ່ຽວກັບຄວາມປະສົງຂອງເຮົາ ພວກເຈົ້າເອງຊໍ້າພັດເຮັດບໍ່
ສັດຊື່ຕໍ່ຄົນທັງຫລາຍ ພຣະຜູ້ເປັນເຈົ້າ ແຫ່ງຈັກກະວານໄດ້ກ່າວດັ່ງນີ້.

## ພວກອິສຣາເອນບໍ່ສັດຊື່

10ພວກເຮົາທຸກຄົນບໍ່ໄດ້ມີພຣະບິດາອົງດຽວກັນບໍ? ແມ່ນພຣະເຈົ້າອົງນັ້ນອົງດຽວທີ່ໄດ້ສ້າງ
ພວກເຮົາບໍ່ແມ່ນບໍ? ແລ້ວດ້ວຍເຫດໃດພວກທ່ານຈຶ່ງລະເມີດຄຳສັນຍາຂອງພວກເຮົາຊຶ່ງມີຕໍ່ກັນ
ແລະກັນ ແລະດ້ວຍເຫດໃດ ພວກເຮົາຈຶ່ງໝິ່ນປະໝາດຄຳໝັ້ນສັນຍາຊຶ່ງພຣະເຈົ້າໄດ້ເຮັດໄວ້

ກັບພວກປູ່ຍ່າຕາຍາຍຂອງພວກເຮົາ? [11]ປະຊາຊົນຢູດາໄດ້ລະເມີດຄຳສັນຍາທີ່ມີຕໍ່ພຣະເຈົ້າ
ແລະໄດ້ເຮັດສິ່ງທີ່ໜ້າກຽດຊັງໃນອິສຣາເອນ ແລະໃນກຸງເຢຣູຊາເລັມ ພວກເຂົາໄດ້ເຮັດໃຫ້
ພຣະວິຫານທີ່ພຣະຜູ້ເປັນເຈົ້າຊົງຮັກເປິເປື້ອນ ຜູ້ຊາຍໄດ້ແຕ່ງງານກັບຜູ້ຍິງທີ່ນັບຖືພະຂອງຊາດ
ອື່ນ. [12]ຂໍໃຫ້ພຣະຜູ້ເປັນເຈົ້າທຳລາຍຜູ້ທີ່ກະທຳເຊັ່ນນັ້ນ ແລະຢ່າຊົງອະນຸຍາດໃຫ້ເຂົ້າຮ່ວມໃນ
ຊົນຊາດຂອງພວກເຮົາອີກຈັກເທື່ອ ຄືເຂົ້າຮ່ວມກັບປະຊາຊົນທີ່ນຳເຄື່ອງບູຊາມາຖວາຍພຣະເຈົ້າ
ແຫ່ງຈັກກະວານ.

[13]ອີກສິ່ງໜຶ່ງທີ່ເຈົ້າໄດ້ກະທຳ ຄືພວກເຈົ້າຮ້ອງໄຫ້ ແລະຄວນຄາງໃສ່ແທ່ນບູຊາຂອງພຣະຜູ້-
ເປັນເຈົ້າ ເພາະວ່າພຣະອົງບໍ່ຍອມຮັບ ແມ່ນແຕ່ຫລຽວເບິ່ງເຄື່ອງບູຊາທີ່ເຈົ້າເອົາມາຖວາຍນັ້ນ
ອີກຕໍ່ໄປ. [14]ແລະເຈົ້າຖາມວ່າ "ເພາະເຫດໃດພຣະອົງຈຶ່ງບໍ່ຮັບ?" ກໍເພາະວ່າພຣະອົງຊົງຮູ້ວ່າ
ເຈົ້າໄດ້ລະເມີດຄຳສັນຍາທີ່ເຮັດໄວ້ກັບເມຍຄາວແຕ່ງງານກັນທຳອິດ ນາງເປັນຄູ່ຄອງຂອງເຈົ້າ
ແລະເຈົ້າໄດ້ລະເມີດຄຳສັນຍາທີ່ເຮັດໄວ້ກັບນາງ ເຖິງແມ່ນເຈົ້າໄດ້ສັນຍາຕໍ່ພຣະຜູ້ເປັນເຈົ້າວ່າ
ຈະສັດຊື່ຕໍ່ນາງກໍດີ. [15]ພຣະເຈົ້າຊົງເຮັດໃຫ້ເຈົ້າກັບນາງເປັນເນື້ອກາຍ ແລະຈິດໃຈອັນດຽວກັນບໍ່
ແມ່ນບໍ? ພຣະອົງມີເຈດຕະນາກ່ຽວກັບສິ່ງນີ້ເພາະຫຍັງ? ກໍເພາະຢາກໃຫ້ພວກເຮົາມີລູກຫລານ
ທີ່ເປັນໄພ່ພົນຂອງພຣະເຈົ້າຢ່າງແທ້ຈິງ ສະນັ້ນ ຈົ່ງລະວັງຕົວໃຫ້ດີ ຢ່າໃຫ້ໃຜລະເມີດຄຳສັນຍາ
ທີ່ໄດ້ເຮັດໄວ້ກັບເມຍຄາວແຕ່ງງານກັນທຳອິດ. [16]ພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງອິ-
ສຣາເອນຊົງກ່າວວ່າ, "ເຮົາກຽດຊັງການຢ່າຮ້າງກັນ ເຮົາກຽດຊັງເມື່ອຜູ້ໃດໃນພວກເຈົ້າເຮັດຮຸນ
ແຮງເຊັ່ນນັ້ນກັບເມຍຂອງຕົນ ດັ່ງນັ້ນ ຈົ່ງລະວັງຕົວໃຫ້ດີ ຢ່າລະເມີດຄຳສັນຍາຂອງຕົນ ຈົ່ງ
ສັດຊື່ຕໍ່ເມຍຂອງເຈົ້າ."

## ວັນຕັດສິນໃກ້ເຂົ້າມາແລ້ວ

[17]ເຈົ້າໄດ້ເຮັດໃຫ້ພຣະຜູ້ເປັນເຈົ້າເມື່ອຍດ້ວຍຄວາມເວົ້າຂອງເຈົ້າ ແຕ່ເຈົ້າຍັງກ້າເວົ້າວ່າ
"ພວກເຮົາໄດ້ເຮັດໃຫ້ພຣະອົງເມື່ອຍຢ່າງໃດ? ກໍດ້ວຍເວົ້າວ່າ, "ພຣະຜູ້ເປັນເຈົ້າຊົງຄິດເຫັນວ່າ
ຜູ້ກະທຳຊົ່ວທຸກຄົນເປັນຄົນດີ ຕາມທີ່ຈິງແລ້ວ ພຣະອົງຊົງພໍພຣະໄທພວກເຂົາ ຫລືດ້ວຍເວົ້າວ່າ
ພຣະເຈົ້າຜູ້ຊົງຍຸດຕິທຳນັ້ນຢູ່ໃສ?"

# ບົດທີ 3

[1]ພຣະຜູ້ເປັນເຈົ້າແຫ່ງຈັກກະວານຊົງຕອບດັ່ງນີ້ ເຮົາຈະສົ່ງຜູ້ສົ່ງຂ່າວໄປຈັດຕຽມຫົນທາງໄວ້
ສຳລັບເຮົາ ແລ້ວໃນທັນໃດນັ້ນ ພຣະຜູ້ເປັນເຈົ້າອົງທີ່ເຈົ້າຊອກສະແຫວງຫາກໍຈະສະເດັດມາໃນ
ພຣະວິຫານຂອງພຣະອົງ ຜູ້ສົ່ງຂ່າວທີ່ພວກເຈົ້າຢາກເຫັນແຕ່ເຫິງນານ ກໍຈະມາປະກາດຄຳໝັ້ນ-
ສັນຍາຂອງເຮົາ.

[2]ແຕ່ໃຜຈະທົນຕໍ່ມື້ທີ່ພຣະອົງຈະສະເດັດມາໄດ້? ໃຜຈະມີຊີວິດຢູ່ໄດ້ເມື່ອພຣະອົງສະເດັດມາ
ປະກົດ? ພຣະອົງຈະເປັນເໝືອນໄຟທີ່ຫລອມໂລຫະ ແລະເປັນດັ່ງສະບູທີ່ມີພະລັງແຮງ. [3]ພຣະ-
ອົງຈະສະເດັດມາຕັດສິນດັ່ງຜູ້ຫລອມເງິນໃຫ້ບໍລິສຸດ ພຣະອົງຈະຊຳລະປະໂລຫິດໃຫ້ບໍລິສຸດ ດັ່ງ
ດຽວກັນກັບເງິນແລະຄຳທີ່ຫລອມແລ້ວ ຄັນແລ້ວ ພວກເຂົາຈະນຳເຄື່ອງບູຊາທີ່ຖືກຕ້ອງມາ

ຖວາຍແດ່ພຣະເຈົ້າ. 4ແລ້ວເຄື່ອງບູຊາທີ່ຊາວຢູດາ ແລະຊາວເຢຣູຊາເລັມນຳມາຖວາຍພຣະ-
ຜູ້ເປັນເຈົ້າຈະເປັນທີ່ພໍພຣະໄທພຣະອົງ ດັ່ງທີ່ພວກເຂົາເຄີຍໄດ້ປະຕິບັດມາແຕ່ກ່ອນ.”
5ພຣະຜູ້ເປັນເຈົ້າແຫ່ງຈັກກະວານກ່າວວ່າ, “ເຮົາຈະມາຫາເຈົ້າເພື່ອພິພາກສາ ແລະຈະເປັນ
ພະຍານຕໍ່ສູ້ຜູ້ປະຕິບັດເວດມົນຄາຖາໃນທັນທີ ຕໍ່ສູ້ຜູ້ລ່ວງປະເວນີ ຕໍ່ສູ້ຜູ້ເປັນພະຍານເທັດ ຕໍ່ສູ້ຜູ້
ທີ່ໂກງຄ່າແຮງງານຂອງຄົນຮັບຈ້າງ ຕໍ່ສູ້ຜູ້ລັກເອົາຜົນປະໂຫຍດຂອງແມ່ໝ້າຍ ເດັກກຳພ້າແລະ
ຄົນຕ່າງດ້າວ ແລະຕໍ່ສູ້ຜູ້ທີ່ບໍ່ຢຳເກງເຮົາ.”

## ການຊຳລະໜຶ່ງສ່ວນສິບ

6ພຣະຜູ້ເປັນເຈົ້າແຫ່ງຈັກກະວານຊົງກ່າວວ່າ, “ເຮົາຄືພຣະຜູ້ເປັນເຈົ້າ ແລະເຮົາຈະບໍ່ປ່ຽນ
ໃຈ ເຊື້ອສາຍຂອງຢາໂຄບເອີຍ ເຈົ້າຍັງບໍ່ທັນຖືກທຳລາຍໝົດເທື່ອ. 7ພວກເຈົ້າໄດ້ຫັນໜີຈາກຂໍ້
ບັງຄັບຂອງເຮົາ ແລະບໍ່ໄດ້ປະຕິບັດຕາມເໝືອນດັ່ງປູ່ຍ່າຕາຍາຍຂອງພວກເຈົ້າ ແຕ່ຈົ່ງກັບມາຫາ
ເຮົາ ແລະເຮົາກໍຈະກັບມາຫາພວກເຈົ້າທັງຫລາຍ ພວກເຈົ້າຖາມວ່າ ພວກຂ້ານ້ອຍຈະເຮັດວິທີ
ໃດຈຶ່ງຈະກັບມາຫາພຣະອົງອີກໄດ້. 8ເຮົາຖາມວ່າ ເປັນການຖືກຕ້ອງບໍ ທີ່ມະນຸດໄດ້ສໍ້ໂກງ
ພຣະເຈົ້າ? ບໍ່ຖືກຕ້ອງ ແຕ່ພວກເຈົ້າກໍໄດ້ສໍ້ໂກງເຮົາ ສໍ້ໂກງຢ່າງໃດ? ກໍສໍ້ໂກງໃນເລື່ອງໜຶ່ງ
ສ່ວນສິບ ແລະເຄື່ອງຖວາຍນັ້ນແຫລະ. 9ຄຳສາບແຊ່ງຈະຕົກຖືກພວກເຈົ້າທັງໝົດ ກໍຍ້ອນວ່າ
ຊົນຊາດທັງໝົດສໍ້ໂກງເຮົາ. 10ຈົ່ງນຳເງິນເຕັມຈຳນວນໜຶ່ງສ່ວນສິບມາທີ່ພຣະວິຫານ ເພື່ອວ່າຈະ
ມີອາຫານໃນພຣະວິຫານ ຈົ່ງລອງເບິ່ງດູ ແລະພວກເຈົ້າຈະເຫັນເຮົາໄຂຟ້າສະຫວັນ ແລ້ວເທ
ພຣະພອນລົງມາຍັງພວກເຈົ້າຢ່າງຫລວງຫລາຍ. 11ເຮົາຈະບໍ່ປ່ອຍໃຫ້ແມງໄມ້ມາທຳລາຍຜົນ-
ລະປູກຂອງພວກເຈົ້າ ແລະຕົ້ນອະງຸ່ນກໍຈະມີໝາກຫລາຍ. 12ຄັນແລ້ວ ປະຊາຊົນທັງຫລາຍກໍ
ຈະເອີ້ນເຈົ້າວ່າ ຜູ້ມີຄວາມສຸກ ເພາະວ່າດິນແດນທີ່ພຣະເຈົ້າຊົງສະຖິດຢູ່ຈະເປັນບ່ອນທີ່ເຕັມໄປ
ດ້ວຍຄວາມຜາສຸກທຸກປະການ.”

## ພຣະເຈົ້າຊົງສັນຍາວ່າຈະເມດຕາ

13ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ພວກເຈົ້າໄດ້ເວົ້າໃສ່ຮ້າຍເຮົາ ແຕ່ພວກເຈົ້າເວົ້າວ່າ ພວກ
ຂ້ານ້ອຍໄດ້ເວົ້າໃສ່ຮ້າຍຫຍັງແກ່ພຣະອົງຢ່າງໃດ. 14ພວກເຈົ້າໄດ້ເວົ້າວ່າ ຮັບໃຊ້ພຣະເຈົ້າເປັນ
ການອັບປະໂຫຍດ ມີປະໂຫຍດຫຍັງທີ່ປະຕິບັດຕາມພຣະອົງຊົງບອກ ຫລືພະຍາຍາມສະແດງຕໍ່
ພຣະຜູ້ເປັນເຈົ້າແຫ່ງຈັກກະວານວ່າ ພວກເຮົາເສຍໃຈໃນສິ່ງທີ່ພວກເຮົາໄດ້ເຮັດ. 15ດັ່ງທີ່ເຮົາ
ເຫັນຄົນອວດຕົວ ແມ່ນພວກໜຶ່ງທີ່ມີຄວາມຍິນດີ ຄົນເຮັດຊົ່ວບໍ່ພຽງແຕ່ຮັ່ງມີເທົ່ານັ້ນ ແຕ່ພວກ
ເຂົາຍັງທົດລອງພຣະເຈົ້າດ້ວຍການກະທຳຊົ່ວຂອງພວກເຂົາ ແລ້ວກໍບໍ່ໄດ້ຮັບໂທດຫຍັງ.”
16ຄັນແລ້ວ ຄົນຢຳເກງພຣະຜູ້ເປັນເຈົ້າກໍເວົ້າຕໍ່ກັນແລະກັນ ພຣະຜູ້ເປັນເຈົ້າກໍຊົງຟັງ ແລະ
ໄດ້ຍິນສິ່ງທີ່ພວກເຂົາເວົ້າ ຕໍ່ພຣະພັກພຣະອົງ ມີປຶ້ມບັນທຶກຊື່ວ່າ ຜູ້ທີ່ຢຳເກງແລະນັບຖືພຣະຜູ້-
ເປັນເຈົ້າ. 17ພຣະຜູ້ເປັນເຈົ້າແຫ່ງຈັກກະວານຊົງກ່າວວ່າ, “ພວກເຂົາຈະເປັນໄພ່ພົນຂອງເຮົາ
ໃນມື້ທີ່ເຮົາປະກອບພາລະກິດ ພວກເຂົາຈະເປັນກຳມະສິດຂອງເຮົາອີ່ຫລີ ເຮົາຈະກະລຸນາພວກ
ເຂົາເໝືອນດັ່ງພໍ່ກະລຸນາລູກຜູ້ທີ່ຮັບໃຊ້ຕົນ. 18ພວກເຈົ້າຈະເຫັນຄວາມແຕກຕ່າງລະຫວ່າງຄົນ
ຊອບທຳ ແລະຄົນອະທຳອິກ ລະຫວ່າງຄົນຜູ້ຮັບໃຊ້ເຮົາ ແລະຜູ້ທີ່ບໍ່ຮັບໃຊ້ເຮົາ.”

# ບົດທີ 4

## ວັນສະເດັດມາຂອງພຣະຜູ້ເປັນເຈົ້າ

[1]ພຣະຜູ້ເປັນເຈົ້າ ແຫ່ງຈັກກະວານຊົງກ່າວວ່າ, "ຈົ່ງເບິ່ງ ເມື່ອວັນນັ້ນມາເຖິງ ຄົນອວດດີທຸກ
ຄົນ ຕະຫລອດຄົນຊົ່ວທຸກຄົນຈະຖືກເຜົາເໝືອນເຜົາເຟືອງ ໃນວັນນັ້ນ ພວກເຂົາຈະຖືກໄຟເຜົາ
ແລະຈະບໍ່ມີຫຍັງເຫລືອ. [2]ແຕ່ສຳລັບເຈົ້າຜູ້ຢຳເກງເຮົາ ອຳນາດແຫ່ງຄວາມຊອບທຳຂອງເຮົາຈະ
ເປັ່ງລັດສະໝີຂຶ້ນມາເໝືອນດວງຕາເວັນ ເພື່ອປິ່ນປົວຮັກສາ ແລະຊ່ອຍພວກເຈົ້າໃຫ້ພົ້ນໄພອັນ-
ຕະລາຍ ພວກເຈົ້າຈະເປັນອິດສະລະ ແລະມີຄວາມສຸກເໝືອນລູກງົວທີ່ອອກຈາກຄອກ. [3]ໃນມື້
ທີ່ເຮົາປະກອບພາລະກິດ ເຈົ້າຈະຊະນະຄົນອະທຳ ແລະພວກເຂົາຈະເປັນເໝືອນຂີ້ຝຸ່ນຢູ່ກ້ອງ
ພື້ນຕີນຂອງເຈົ້າ" ພຣະຜູ້ເປັນເຈົ້າ ແຫ່ງຈັກກະວານຊົງກ່າວດັ່ງນີ້ແຫລະ.

[4]ຈົ່ງຈົດຈຳພຣະທຳຂອງ ໂມເຊ ຜູ້ຮັບໃຊ້ຂອງເຮົາພ້ອມທັງຂໍ້ບັນຍັດ ແລະຄຳສັ່ງສອນຊຶ່ງເຮົາ
ໄດ້ໃຫ້ແກ່ລາວທີ່ພູໂຮເຣັບ ເພື່ອໃຫ້ປະຊາຊົນອິສຣາເອນທຸກຄົນເຊື່ອຟັງ. [5]ແຕ່ວ່າ ກ່ອນວັນຍິ່ງ
ໃຫຍ່ ແລະວັນໂຫດຮ້າຍຂອງພຣະຜູ້ເປັນເຈົ້າຈະມາເຖິງ ເຮົາຈະສົ່ງ ເອລີຢາຜູ້ປະກາດພຣະທຳ
ມາຫາພວກເຈົ້າ. [6]ລາວຈະນຳພໍ່ແລະລູກທັງຫລາຍມາພົບກັນອີກ ບໍ່ດັ່ງນັ້ນ ເຮົາຈະສະເດັດມາ
ແລະທຳລາຍປະເທດຂອງພວກເຈົ້າ."

* * *

# ຊື່ທີ່ພົບໃນພຣະຄຳພີພຣະສັນຍາເດີມ

| | | | | | |
|---|---|---|---|---|---|
| ກາເດັດ | Kadesh | ປຖກ 14:7 | ສີເສຣາ | Sisera | ຜປຄ 4:2 |
| ການາ | Cana | ຢຊຢ 16:8 | ສີໂຮນ | Sihon | ພບຍ 31:4 |
| ການາອານ | Canaan | ປຖກ 9:18 | ເສອີ | Seir | ປຖກ 14:5 |
| ກາເມນ | Carmel | 1ຊມອ 25:2 | ສຸກໂກດ | Succoth | ປຖກ 33:16 |
| ກາເລັບ | Caleb | ຢຊຢ 21:12 | ສິນ | Sin | ຈຊບ 33:11 |
| ກາອິນ | Cain | ປຖກ 4:1 | ເສຣາ | Serah | ຈຊບ 26:46 |
| ກິເບອາ | Gibea | ຢຊຢ 15:57 | ເສຣາຢາ | Seraiah | 2ຊມອ 8:17 |
| ກິເບໂອນ | Gibeon | ຢຊຢ 21:17 | ຊາຊາ | Zaza | 1ຂຄວ 2:33 |
| ກີເລອາດ | Gilead | ປຖກ 31:21 | ຊາໂດກ | Sadoc | 2ຊມອ 8:17 |
| ກີເຊ | Kish | 1ຊມອ 9:1 | ຊາຟານ | Shaphan | 2ກສດ 22:3 |
| ກີເດໂອນ | Gideon | ຜປຄ 6:11 | ຊາມາ | Shama | 1ຂຄວ 11:44 |
| ກີຣີຢາດ | Kiriath | ຢຊຢ 18:28 | ຊາມາເຣຍ | Samaria | 1ກສດ 22:51 |
| ກີຣີຢາດ-ເຢອາຣິມ | Kiriath-jearim | ຢຊຢ 9:17 | ຊາມູເອນ | Samuel | 1ຊມອ 25:1 |
| ເກເຊ | Gezer | ຢຊຢ 21:21 | ຊາຣາ | Sarah | ປຖກ 17:15 |
| ເກໂຊນ | Gershon | ປຖກ 46:8 | ຊາເລັມ | Salem | ປຖກ 14:18 |
| ເກດາ | Kedar | ປຖກ 25:13 | ຊາອູນ | Saul | ປຖກ 36:37 |
| ເກດາລີຢາ | Gedaliah | 2ກສດ 25:22 | ຊີເມອີ | Shimei | ອພຍ 6:17 |
| ເກບາ | Geba | ຢຊຢ 21:17 | ຊີເມໂອນ | Simeon | ປຖກ 29:33 |
| ເກອີລາ | Keilah | ຢຊຢ 15:44 | ຊິມຣີ | Zimri | ຈຊບ 25:14 |
| ໂກໂມຣາ | Gomorrah | ປຖກ 10:19 | ຊີໂດນ | Sidon | ປຖກ 10:15 |
| ໂກຣາ | Korah | ປຖກ 36:5 | ຊີນາ | Zina | ປຖກ 10:10 |
| ໂກລີອາດ | Goliath | 1ຊມອ 17:4 | ຊີນາຍ | Sinai | ອພຍ 16:1 |
| ໂກອາ | Koa | ພຄຄ 31:39 | ຊີບາ | Ziba | ປຖກ 26:33 |
| ໂກຮາດ | Kohath | ປຖກ 46:8 | ຊີເຣຍ | Syria | ຜປຄ 10:6 |
| ກັດ | Gath | ຢຊຢ 11:22 | ຊີໂລ | Shiloh | ຢຊຢ 21:2 |
| ກິນການ | Gilgal | ຜປຄ 3:19 | ຊີໂອ | Zior | ຢຊຢ 15:54 |
| ກູນ | Cun | 1ຂຄວ 18:8 | ຊີໂອນ | Zion | ພສສ 9:11 |
| ເກຣາ | Gerar | ປຖກ 10:19 | ຊູຊາ | Shushan | ນຣຍ 1:1 |
| ຄາຊາ | Gaza | ປຖກ 10:19 | ຊູເຣ | Zur | ປຖກ 16:7 |
| ຄາດ | Gad | ປຖກ 30:11 | ຊູອາ | Zuar | ປຖກ 25:2 |
| ສາຣາຍ | Sarai | ປຖກ 11:29 | ເຊຄາຣີຢາ | Zechariah | 2ກສດ 14:29 |

| | | |
|---|---|---|
| ເຊເຄັມ | Shechem | ປຖກ 12:6 |
| ເຊເຊັດ | Ahasuerus | ອຊຣ 4:6 |
| ເຊເດກີຢາ | Zedekiah | 1ກສດ 22:11 |
| ເຊບາ | Zebah | ປຖກ 10:7 |
| ເຊບູລູນ | Zebulun | ປຖກ 30:20 |
| ເຊເບ | Sheber | 1ຂຄວ 2:48 |
| ເຊມາ | Shema | ປຖກ 10:17 |
| ເຊມາຢາ | Shemaiah | 1ກສດ 12:22 |
| ເຊເມັດ | Shemed | 1ຂຄວ 8:12 |
| ເຊຣູບາເບນ | Zerubbabel | 1ຂຄວ 3:19 |
| ເຊຣູຢາ | Zeruiah | 1ຊມອ 26:6 |
| ເຊລາ | Zela | ປຖກ 10:24 |
| ເຊອານ | Sheal | ອຊຣ 10:29 |
| ໂຊໂດມ | Sodom | ປຖກ 10:19 |
| ໂຊບາ | Zobah | 1ຊມອ 14:47 |
| ໂຊໂລໂມນ | Solomon | 2ຊມອ 5:14 |
| ໂຊອາ | Zoar | ປຖກ 13:10 |
| ໄຊຣັດ | Cyrus | 2ຂຄວ 36:22 |
| ຊີດ | Ziz | 2ຂຄວ 20:16 |
| ເຊດ | Seth | ປຖກ 4:25 |
| ຊານລູມ | Shallum | 2ກສດ 15:10 |
| ຊີນ | Zin | ຈຊບ 13:21 |
| ຊີບ | Ziv | 1ກສດ 6:37 |
| ເຊມ | Shem | ປຖກ 5:32 |
| ແຊມຊັນ | Samson | ຜປຄ 13:24 |
| ເຊຣາ | Zerah | ປຖກ 36:13 |
| ດານີເອນ | Daniel | 1ຂຄວ 3:1 |
| ດາມາເຊ | Damascus | ປຖກ 14:15 |
| ດາຣິອຸດ | Darius | ອຊຣ 4:5 |
| ດາວິດ | David | 1ຊມອ 24:16 |
| ໂດເຣ | Dor | ຢຊຢ 11:2 |
| ດານ | Dan | ປຖກ 14:14 |

| | | |
|---|---|---|
| ຕາຊິດ | Tarshish | ປຖກ 10:4 |
| ຕາມາ | Tamar | ປຖກ 38:6 |
| ຕີຣະຊາ | Tirzah | ຈຊບ 26:33 |
| ຕີເຣ | Tyre | ຢຊຢ 19:29 |
| ເຕມາ | Tema | ປຖກ 25:14 |
| ເຕມານ | Teman | ປຖກ 36:11 |
| ໂຕບີຢາ | Tobiah | 2ຂຄວ 17:8 |
| ຕິມນາ | Timna | ປຖກ 36:12 |
| ນາດາບ | Nadab | ອພຍ 24:1 |
| ນາທານ | Nathan | 2ຊມອ 5:14 |
| ນາໂບດ | Naboth | 1ກສດ 21:1 |
| ນາບານ | Nabal | 1ຊມອ 25:3 |
| ນາອາມາ | Naamah | ປຖກ 4:22 |
| ນາອາມານ | Naaman | ປຖກ 46:19 |
| ນາໂອມີ | Naomi | ນຣດ 1:2 |
| ນາອາມ | Naam | 1ຂຄວ 4:15 |
| ນາໂຮ | Nahor | ປຖກ 11:22 |
| ນາຮາດ | Nahath | ປຖກ 36:13 |
| ນີເນເວ | Nineveh | ປຖກ 10:11 |
| ນີເລ | Nile | ປຖກ 41:1 |
| ເນ | Ner | 1ຊມອ 14:50 |
| ເນໂກ | Neco | 2ກສດ 23:29 |
| ເນທານີອາ | Nethaniah | 2ກສດ 25:23 |
| ເນບູກາດເນັດຊາ | Nebuchadnezzar | 2ກສດ 24:1 |
| ເນບູຊາຣາດານ | Nebuzaradan | 2ກສດ 25:8 |
| ເນບັດ | Nebat | 1ກສດ 22:52 |
| ເນອາ | Neah | ຢຊຢ 19:13 |
| ໂນອາ | Noah | ປຖກ 5:29 |
| ນູນ | Nun | ພບຍ 31:23 |
| ນັບທາລີ | Naphtali | ປຖກ 30:8 |
| ບາຊານ | Bashan | ຢຊຢ 20:8 |
| ບານີ | Bani | 2ຊມອ 23:36 |

## ຊື່ໃນພຣະສັນຍາເດີມ

| | | |
|---|---|---|
| ບາບີໂລນ | Babylon | ຢຊຢ 7:21 |
| ບາເບນ | Babel | ປຖກ 10:10 |
| ບາຣຸກ | Baruch | ພຄຄ 36:10 |
| ບາລາ | Balah | ຢຊຢ 19:3 |
| ບາລາອາມ | Balaam | ຈຊບ 22:5 |
| ບາລາກ | Balak | ຈຊບ 22:2 |
| ບາອາຊາ | Baasha | 1ກສດ 15:16 |
| ບາອານ | Baal | ປຖກ 36:38 |
| ບີຊາ | Birsha | ປຖກ 14:2 |
| ເບນາຢາ | Benaiah | 2ຊມອ 8:18 |
| ເບເອ | Beer | ຈຊບ 21:16 |
| ເບເອ-ເຊບາ | Beer-sheba | ປຖກ 21:14 |
| ເບໂອ | Beor | ປຖກ 36:32 |
| ເບໂອນ | Beon | ຈຊບ 32:3 |
| ໂບເຊັດ | Bozez | 1ຊມອ 14:4 |
| ໂບອາດ | Boaz | ນຣດ 2:1 |
| ເບັດ-ເຊເມັດ | Beth-shemesh | ຢຊຢ 21:16 |
| ເບັດເລເຮັມ | Bethlehem | ປຖກ 35:19 |
| ເບັດເອນ | Bethel | ປຖກ 12:8 |
| ເບັນ | Ben | 1ຂຄວ 15:18 |
| ເບັນຢາມິນ | Benjamin | ປຖກ 35:18 |
| ເບັນຮາດັດ | Benhadad | 1ກສດ 15:20 |
| ເບນ | Bel | ອຊຢ 46:1 |
| ເປກາ | Pekah | 2ກສດ 15:25 |
| ເປຣິຊີ | Perizzite | ປຖກ 13:6 |
| ເປເຣັດ | Perez | ປຖກ 38:29 |
| ເປີເຊຍ | Persia | 2ຂຄວ 36:20 |
| ປັດສະຄາ | Passover | ອພຍ 12:11 |
| ປູນ | Pul | 1ຂຄວ 5:26 |
| ພະບາອານ | Baal | ຜປຄ 3:7 |
| ຟາຣາໂອ | Pharaoh | ປຖກ 12:15 |
| ຟີເນຮາດ | Phinehas | ອພຍ 6:25 |
| ຟີລິດສະຕິນ | Philistine | ປຖກ 10:14 |
| ມາກີ | Machi | ປຖກ 50:23 |
| ມາສາ | Massah | ອພຍ 17:7 |
| ມານາເຊ | Manasseh | ປຖກ 41:51 |
| ມາລາ | Mahlah | ຈຊບ 26:33 |
| ມາລີ | Mahli | ອພຍ 6:19 |
| ມາອາກາ | Maacathite | ປຖກ 22:24 |
| ມາອາເສຢາ | Maaseiah | 1ຂຄວ 15:18 |
| ມາອາດ | Maaz | 1ຂຄວ 2:27 |
| ມີກາ | Mica | ຜປຄ 17:1 |
| ມີກາຢາ | Micaiah | 1ກສດ 22:8 |
| ມີການ | Michal | 1ຊມອ 14:49 |
| ມີດີອານ | Midian | ປຖກ 25:2 |
| ເມຊາ | Mesha | ປຖກ 10:30 |
| ເມໂຊໂປຕາເມຍ | Paddan | ປຖກ 24:10 |
| ເມຊຸນລຳ | Meshullam | 2ກສດ 22:3 |
| ເມເດຍ | Mede | 2ກສດ 17:6 |
| ເມເລັກ | melech | 2ກສດ 23:11 |
| ໂມເຊ | Moses | ອພຍ 2:10 |
| ໂມອາບ | Moab | ປຖກ 19:37 |
| ມໍເດກາຍ | Mordecai | ອຊຣ 2:2 |
| ມິດຊະປາ | Mizpah | ປຖກ 31:49 |
| ມັດຕານີຢາ | Mattaniah | 2ກສດ 24:17 |
| ມັນກີຢາ | Malchijah | 1ຂຄວ 6:40 |
| ເມຣາຣີ | Merari | ປຖກ 46:8 |
| ຢາກິນ | Jachin | ປຖກ 46:8 |
| ຢາກີມ | Jakim | 1ຂຄວ 8:19 |
| ຢາໂຄບ | Jacob | ປຖກ 25:26 |
| ຢາເຊ | Jazer | ຈຊບ 21:32 |
| ຢາດາ | Jada | 1ຂຄວ 2:28 |
| ຢາເບັດ | Jabesh | ຜປຄ 21:8 |
| ຢາມິນ | Jamin | ປຖກ 46:8 |

# ຊື່ໃນພຣະສັນຍາເດີມ

| | | |
|---|---|---|
| ຢູດາ | Judah | ປຖກ 29:35 |
| ເຢຊີ | Jesse | 1ຊມອ 25:10 |
| ເຢຊູອາ | Jeshua | 1ຂຄວ 24:11 |
| ເຢເຊ | Jesher | 1ຂຄວ 2:18 |
| ເຢເຊເບນ | Jezebel | 1ກສດ 16:31 |
| ເຢບຸດ | Jebus | ປຖກ 10:16 |
| ເຢຣີໂກ | Jericho | ຢຊຍ 20:8 |
| ເຢຣູຊາເລັມ | Jerusalem | 1ກສດ 22:42 |
| ເຢເຣມີຢາ | Jeremiah | 2ກສດ 23:31 |
| ເຢໂຣໂບອາມ | Jeroboam | 1ກສດ 22:52 |
| ເຢອາຣິມ | Jearim | ຢຊຍ 15:10 |
| ເຢຮູ | Jehu | 1ກສດ 16:1 |
| ເຢໂຮຊາຟັດ | Jehoshaphat | 1ກສດ 22:41 |
| ເຢໂຮຢາກິນ | Jehoiachin | 2ກສດ 24:6 |
| ເຢໂຮຢາກິມ | Jehoiakim | 2ກສດ 23:34 |
| ເຢໂຮຢາດາ | Jehoiada | 2ຊມອ 8:18 |
| ເຢໂຮຣາມ | Jehoram | 1ກສດ 22:50 |
| ເຢໂຮອາຮາດ | Jehoahaz | 2ກສດ 10:35 |
| ໂຢສິຢາ | Josiah | 1ກສດ 13:2 |
| ໂຢຊວຍ | Joshua | ອພຍ 17:8 |
| ໂຢເຊັບ | Joseph | ປຖກ 30:24 |
| ໂຢທາມ | Jotham | ຜປຄ 9:5 |
| ໂຢນາ | Jonah | 2ກສດ 14:25 |
| ໂຢນາທານ | Jonathan | ຜປຄ 18:30 |
| ໂຢຣາ | Jorah | ອຊຣ 2:18 |
| ໂຢຣາມ | Joram | 2ຊມອ 8:10 |
| ໂຢອາ | Joah | 2ກສດ 18:18 |
| ໂຢອາດ | Joash | ຜປຄ 6:11 |
| ໂຢເອນ | Joel | 1ຊມອ 8:2 |
| ໂຢອາບ | Joab | 1ຊມອ 26:6 |
| ໂຢຮາ | Joha | 1ຂຄວ 8:16 |
| ໂຢຮານານ | Johanan | 2ກສດ 25:23 |

| | | |
|---|---|---|
| ຢໍແດນ | Jordan | ປຖກ 13:10 |
| ເຢດຊະເຣເອນ | Jezreel | ຢຊຍ 15:56 |
| ເຢັບທາ | Jephthah | ຜປຄ 11:1 |
| ໂຢບ | Job | ໂຢບ 1:1 |
| ຣາເຄນ | Rachel | ປຖກ 29:6 |
| ຣາມາ | Ramah | 1ຊມອ 25:1 |
| ຣາໂມດ | Ramoth | ຢຊຍ 20:8 |
| ຣາຮາມ | Raham | 1ຂຄວ 2:44 |
| ຣູເບັນ | Reuben | ປຖກ 29:32 |
| ເຣກາ | Recah | 1ຂຄວ 4:12 |
| ເຣກາບ | Rechab | 2ຊມອ 4:2 |
| ເຣເບກາ | Rebekah | ປຖກ 22:22 |
| ເຣຟາ | Rephah | 1ຂຄວ 7:25 |
| ເຣໂຮໂບອາມ | Rehoboam | 1ກສດ 11:43 |
| ຣຸດ | Ruth | ນຣດ 1:4 |
| ຣາມ | Ram | ນຣດ 4:19 |
| ຣິມໂມນ | Rimmon | ຢຊຍ 15:32 |
| ລາກິດ | Lachish | ຢຊຍ 10:3 |
| ລາຊາ | Lasha | ປຖກ 10:19 |
| ລາບານ | Laban | ປຖກ 24:29 |
| ເລບານອນ | Lebanon | ຜປຄ 3:3 |
| ເລວີ | Levi | ປຖກ 29:34 |
| ເລອາ | Leah | ປຖກ 29:16 |
| ໂລດ | Lot | ປຖກ 11:28 |
| ລິບນາ | Libnah | ຢຊຍ 21:14 |
| ອະໂມຣິດ | Amorite | ປຖກ 10:16 |
| ອາກີ | Arkite | ປຖກ 10:17 |
| ອາກິເຊ | Achish | 1ຊມອ 21:10 |
| ອາສາເຮນ | Asahel | 2ຊມອ 2:18 |
| ອາສັບ | Asaph | 2ກສດ 18:18 |
| ອາຊະໂດດ | Ashdod | ຢຊຍ 11:22 |
| ອາຊາ | Asa | 1ກສດ 22:41 |

### ຊື່ໃນພຣະສັນຍາເດີມ

| | | |
|---|---|---|
| ອາຊາຣີຢາ | Azariah | 1ກສດ 4:2 |
| ອາເຊ | Asher | ປຖກ 30:12 |
| ອາດາ | Adar | ປຖກ 4:19 |
| ອາໂດນີຢາ | Adonijah | 2ຊມອ 3:4 |
| ອາທາລີຢາ | Athaliah | 2ກສດ 8:26 |
| ອານາ | Anna | ປຖກ 36:2 |
| ອານາໂທດ | Anathoth | ຢຊຢ 21:18 |
| ອາໂນນ | Arnon | ຈຊບ 21:13 |
| ອາບີ | Abi | 2ກສດ 18:2 |
| ອາບີກາຍ | Abigail | 1ຊມອ 25:3 |
| ອາບີຊາຍ | Abishai | 1ຊມອ 26:6 |
| ອາບີເມເລັກ | Abimelech | ປຖກ 20:2 |
| ອາບີຢາ | Abijah | 1ຊມອ 8:2 |
| ອາບີອາທາ | Abiathar | 1ຊມອ 22:20 |
| ອາເບັນ | Abel | ປຖກ 4:2 |
| ອາມາສາ | Amasa | 2ຊມອ 17:25 |
| ອາມາຊີຢາ | Amaziah | 2ກສດ 12:21 |
| ອາມາເລັກ | Amalek | ປຖກ 14:7 |
| ອາໂມດ | Amoz | 2ກສດ 19:2 |
| ອາມານ | Amal | 1ຂຄວ 7:35 |
| ອາໂມນ | Amon | 1ກສດ 22:26 |
| ອາຣາ | Ara | 1ຂຄວ 7:38 |
| ອາໂຣເອ | Aroer | ຈຊບ 32:34 |
| ອາໂຣນ | Aaron | ອພຍ 4:14 |
| ອາຣາມ | Aram | ປຖກ 10:22 |
| ອາອີ | Ai | ປຖກ 12:8 |
| ອາຮາຊີຢາ | Ahaziah | 1ກສດ 22:40 |
| ອາຮີ | Ahi | 1ຂຄວ 5:15 |
| ອາຮີການ | Ahikam | 2ກສດ 22:12 |
| ອາຮີຕູບ | Ahitub | 1ຊມອ 14:3 |
| ອາຮີໂທເຟັນ | Ahithophel | 2ຊມອ 15:12 |
| ອາຮີມາອາດ | Ahimaaz | 1ຊມອ 14:50 |
| ອາຮີຢາ | Ahijah | 1ຊມອ 14:3 |
| ອາຮາດ | Ahaz | 2ກສດ 15:38 |
| ອາຮາບ | Ahab | 1ກສດ 22:40 |
| ອິສຣາເອນ | Israel | ປຖກ 32:28 |
| ອີຊາກ | Isaac | ປຖກ 17:19 |
| ອີທາມາ | Ithamar | ອພຍ 6:23 |
| ອູຣີ | Uri | ອພຍ 31:2 |
| ອູຣີຢາ | Uriah | 2ຊມອ 11:3 |
| ອູເອນ | Uel | ອຊຣ 10:34 |
| ເອສະເທີ | Esther | ອສທ 2:7 |
| ເອຊາຢາ | Isaiah | 2ກສດ 19:2 |
| ເອເຊ | Ezer | ປຖກ 36:21 |
| ເອຊາວ | Esau | ປຖກ 25:24 |
| ເອເດັນ | Eden | ປຖກ 2:8 |
| ເອໂດມ | Edom | ປຖກ 25:30 |
| ເອທີໂອເປຍ | Ethiopia | 2ກສດ 19:9 |
| ເອຟາ | Ephah | ປຖກ 25:4 |
| ເອໂຟດ | Ephod | ລລວ 8:7 |
| ເອຟຣາຢິມ | Ephraim | ປຖກ 41:52 |
| ເອຟຣາດ | Euphrates | ປຖກ 2:14 |
| ເອຢິບ | Egypt | ປຖກ 12:10 |
| ເອລາ | Ela | ປຖກ 36:41 |
| ເອລີ | Eli | 1ຊມອ 1:3 |
| ເອລີຊາ | Elisha | ປຖກ 10:4 |
| ເອລີຊາມາ | Elishama | ຈຊບ 1:10 |
| ເອລີຢາ | Elijah | 2ກສດ 1:3 |
| ເອລີອາບ | Eliab | ຈຊບ 1:9 |
| ເອເລອາຊາ | Eleazar | ອພຍ 6:23 |
| ເອລາມ | Elam | ປຖກ 10:22 |
| ໂອບາດີຢາ | Obadiah | 1ກສດ 18:3 |
| ໂອເບັດ | Obed | ນຣດ 4:17 |
| ອຳໂນນ | Amnon | 2ຊມອ 3:2 |

## ຊື່ໃນພຣະສັນຍາເດີມ

| | | |
|---|---|---|
| ອຳໂມນ | Ammon | ປຖກ 19:38 |
| ເອັກໂຣນ | Ekron | 2ກສດ 1:2 |
| ໂອກ | Og | ພບຍ 31:4 |
| ອາດ | Ard | ປຖກ 46:19 |
| ອິດຊະມາເອນ | Ishmael | ປຖກ 16:11 |
| ອິດຊາຄາ | Issachar | ປຖກ 30:18 |
| ອຸດຊີ | Uzzi | 1ຂຄວ 6:5 |
| ອຸດຊີຢາ | Uzzia | 2ກສດ 15:13 |
| ອຸດຊີເອນ | Uzziel | ອພຍ 6:18 |
| ເອັດຊະຣາ | Ezra | 1ກສດ 4:31 |
| ອັດຊີເຣຍ | Asshur | ປຖກ 2:14 |
| ເອນການາ | Elkanah | ອພຍ 6:24 |
| ໂອນ | On | ປຖກ 41:45 |
| ອັບຊາໂລມ | Absalom | 2ຊມອ 3:3 |
| ອັບເນ | Abner | 1ຊມອ 14:51 |
| ອັບຣາຮາມ | Abraham | ປຖກ 17:5 |
| ອັບຣາມ | Abram | ປຖກ 11:26 |
| ອົມຣີ | Omri | 1ກສດ 16:16 |
| ຮາກາ | Hagar | ປຖກ 16:1 |
| ຮາຊາ | Hazar | ອຊຣ 2:52 |
| ຮາຊາເອນ | Hazael | 1ກສດ 19:15 |
| ຮາໂຊ | Hazo | ປຖກ 22:22 |
| ຮາດັດ | Hadad | ປຖກ 25:14 |
| ຮາດັດເອເຊີ | Hadarezer | 2ຊມອ 8:3 |
| ຮານານີ | Hanani | 1ກສດ 16:1 |
| ຮານານີຢາ | Hananiah | 1ຂຄວ 3:19 |
| ຮາມັດ | Hamath | ປຖກ 10:17 |
| ຮາມານ | Haman | ອສທ 3:1 |
| ຮາຣາ | Hara | 2ຊມອ 23:11 |
| ຮາຣານ | Haran | ປຖກ 11:26 |
| ຮີຣາ | Hirah | ປຖກ 38:1 |
| ຮີຣາມ | Hiram | 2ຊມອ 5:11 |
| ຮີວີ | Hivite | ປຖກ 10:17 |
| ຮູຊາ | Hushah | 1ຂຄວ 4:4 |
| ຮູຊາຍ | Hushai | 2ຊມອ 15:32 |
| ຮູເຣ | Hur | ອພຍ 17:10 |
| ເຮເຊກີຢາ | Hezekiah | 2ກສດ 16:20 |
| ເຮເບ | Heber | ປຖກ 10:21 |
| ໂຮເຊອາ | Hosea | ຈຊບ 13:3 |
| ໂຮໂຣນ | Horonite | ນຮຢ 2:10 |
| ໂຮຣາມ | Horam | ຢຊຍ 10:33 |
| ຮິດຕີ | Hittite | ປຖກ 15:18 |
| ເຮັດຊະໂບນ | Heshbon | ຈຊບ 21:25 |
| ເຮດ | Heth | ປຖກ 10:15 |
| ເຮດຊະໂຣ | Hezro | 2ຊມອ 23:35 |
| ເຮດຊະໂຣນ | Hezron | ປຖກ 46:8 |
| ຮິນກີຢາ | Hilkiah | 2ກສດ 18:18 |
| ຮຸນ | Hul | ປຖກ 10:23 |
| ເຮັບເຣີ | Hebrew | ປຖກ 14:13 |
| ເຮັບໂຣນ | Hebron | ປຖກ 13:18 |
| ຮາມ | Ham | ປຖກ 5:32 |